# ພຣະຄຳພີ

## ພຣະສັນຍາໃໝ່

ຊະບັບ 2015

# ສາລາບານ


| ຊື່ພຣະທຳ | ຕົວຫຍໍ້ | ໜ້າ |
|---|---|---|
| ມັດທາຍ | ມທ | 1 |
| ມາຣະໂກ | ມຣກ | 63 |
| ລູກາ | ລກ | 101 |
| ໂຢຮັນ | ຢຮ | 167 |
| ກິດຈະການ | ກຈກ | 214 |
| ໂຣມ | ຣມ | 273 |
| 1 ໂກຣິນໂທ | 1ກຣທ | 301 |
| 2 ໂກຣິນໂທ | 2ກຣທ | 326 |
| ຄາລາເຕຍ | ຄລຕ | 343 |
| ເອເຟໂຊ | ອຟຊ | 352 |
| ຟີລິບປອຍ | ຟລປ | 362 |
| ໂກໂລຊາຍ | ກລຊ | 369 |
| 1 ເທຊະໂລນີກ | 1ທຊນ | 376 |
| 2 ເທຊະໂລນີກ | 2ທຊນ | 382 |
| 1 ຕີໂມທຽວ | 1ຕມທ | 386 |
| 2 ຕີໂມທຽວ | 2ຕມທ | 393 |
| ຕີໂຕ | ຕຕ | 399 |
| ຟີເລໂມນ | ຟລມ | 402 |
| ເຮັບເຣີ | ຮຣ | 404 |
| ຢາໂກໂບ | ຢກບ | 424 |
| 1 ເປໂຕ | 1ປຕ | 431 |
| 2 ເປໂຕ | 2ປຕ | 439 |
| 1 ໂຢຮັນ | 1ຢຮ | 444 |
| 2 ໂຢຮັນ | 2ຢຮ | 451 |
| 3 ໂຢຮັນ | 3ຢຮ | 452 |
| ຢູດາ | ຢດ | 454 |
| ພຣະນິມິດ | ພນມ | 456 |



The 2015 edition of the Lao Bible has been revised and extended from the Lao Shorter Old Testament and New Testament, originally published in 1991 by Thailand Bible Society.

For more information, please visit: **http://laobible.net/**.

# ຂ່າວປະເສີດເລື່ອງພຣະເຢຊູຄຣິດ
## ຮຽບຮຽງໂດຍ
# ມັດທາຍ

## ບົດທີ 1
### ລຳດັບເຊື້ອວົງຂອງພຣະເຢຊູຄຣິດ
*(ລກ 3:23-28)*

1ໜັງສືລຳດັບເຊື້ອວົງຂອງ ພຣະເຢຊູຄຣິດ ຜູ້ເປັນເຊື້ອສາຍຂອງ ດາວິດ ຜູ້ສືບກະກູນເນື່ອງ
ມາຈາກ ອັບຣາຮາມ.
2ອັບຣາຮາມ ມີບຸດຊາຍຊື່ ອີຊາກ ອີຊາກ ມີບຸດຊາຍຊື່ ຢາໂຄບ ຢາໂຄບ ມີບຸດຊາຍຊື່ ຢູດາ
ແລະອ້າຍນ້ອງຂອງຕົນ. 3ຢູດາ ມີບຸດຊາຍຊື່ ເປເຣັດ ແລະ ເຊຣາ ເກີດຈາກນາງ ຕາມາ ເປເຣັດ
ມີບຸດຊາຍຊື່ ເຣດຊະໂຣນ, ເຣດຊະໂຣນ ມີບຸດຊາຍຊື່ ຣາມ. 4ຣາມ ມີບຸດຊາຍຊື່ ອຳມີນາດາບ
ອຳມີນາດາບ ມີບຸດຊາຍຊື່ ນາໂຊນ ນາໂຊນ ມີບຸດຊາຍຊື່ ຊັນໂມນ. 5ຊັນໂມນ ມີບຸດຊາຍຊື່ ໂບ-
ອາດ ເກີດຈາກນາງ ຣາຣາບ ໂບອາດ ມີບຸດຊາຍຊື່ ໂອເບັດ ເກີດຈາກນາງ ຣຸດ ໂອເບັດ ມີບຸດ
ຊາຍຊື່ ເຢຊີ. 6ເຢຊີ ມີບຸດຊາຍຊື່ ດາວິດ ຜູ້ຊົງເປັນກະສັດ.
ກະສັດ ດາວິດ ຊົງມີບຸດຊາຍຊື່ ໂຊໂລໂມນ ຊົງເກີດຈາກນາງຊຶ່ງ ແຕ່ກ່ອນເປັນພັນລະຍາຂອງ
ອູຣີຢາ. 7ກະສັດ ໂຊໂລໂມນ ຊົງມີບຸດຊາຍຊື່ ເຣໂຣໂບອາມ ເຣໂຣໂບອາມ ມີບຸດຊາຍຊື່ອະບີຢາ
ອະບີຢາມີບຸດຊາຍຊື່ ອາຊາ. 8ອາຊາ ມີບຸດຊາຍຊື່ ເຢໂຮຊາຟັດ ເຢໂຮຊາຟັດ ມີບຸດຊາຍຊື່ ໂຢຣາມ
ໂຢຣາມ ມີບຸດຊາຍຊື່ ອຸດຊີຢາ. 9ອຸດຊີຢາ ມີບຸດຊາຍຊື່ ໂຢທາມ ໂຢທາມ ມີບຸດຊາຍຊື່ ອາຮາດ
ອາຮາດ ມີບຸດຊາຍຊື່ ເຮເຊກີຢາ. 10ເຮເຊກີຢາ ມີບຸດຊາຍຊື່ ມານາເຊ ມານາເຊ ມີບຸດຊາຍຊື່ ອາ-
ໂມນ ອາໂມນ ມີບຸດຊາຍຊື່ ໂຢສີຢາ. 11ໂຢສີຢາ ມີບຸດຊາຍຊື່ ເຢໂຮຢາກິນ ກັບພວກອ້າຍນ້ອງ
ຂອງຕົນ ເກີດໃນເວລາຖືກກວາດໄປຍັງກຸງ ບາບີໂລນ.
12ຄັນຖືກກວາດ ໄປຍັງກຸງ ບາບີໂລນ ແລ້ວ ເຢໂຮຢາກິນ ກໍມີບຸດຊາຍຊື່ ເຊອານຕີເອນ ເຊ-
ອານຕີເອນ ມີບຸດຊາຍຊື່ ເຊຣູບາເບນ. 13ເຊຣູບາເບນ ມີບຸດຊາຍຊື່ ອາບີອຸດ ອາບີອຸດ ມີບຸດຊາຍ
ຊື່ ເອລີຢາກິມ ເອລີຢາກິມ ມີບຸດຊາຍຊື່ ອາໂຊ. 14ອາໂຊ ມີບຸດຊາຍຊື່ ຊາໂດກ ຊາໂດກ ມີບຸດ
ຊາຍຊື່ ອາຂິມ ອາຂິມ ມີບຸດຊາຍຊື່ ເອລີອຸດ. 15ເອລີອຸດ ມີບຸດຊາຍຊື່ ເອເລອາຊາ ເອເລອາຊາ ມີ
ບຸດຊາຍຊື່ ມັດທານ ມັດທານ ມີບຸດຊາຍຊື່ ຢາໂຄບ. 16ຢາໂຄບ ມີບຸດຊາຍຊື່ ໂຢເຊັບ ຜູ້ເປັນສາມີ
ຂອງນາງ ມາຣີອາ ພຣະເຢຊູ ຜູ້ທີ່ເອີ້ນວ່າ ພຣະຄຣິດ ກໍຊົງບັງເກີດມາຈາກນາງ ມາຣີອາ ຜູ້ນີ້.
17ດັ່ງນັ້ນນັບຕັ້ງແຕ່ ອັບຣາຮາມ ລົງມາຈົນ ເຖິງກະສັດ ດາວິດ ຈຶ່ງເປັນສິບສີ່ຊົ່ວຄົນ ນັບຕັ້ງແຕ່
ກະສັດ ດາວິດ ຈົນເຖິງຄາວຖືກກວາດໄປຍັງກຸງ ບາບີໂລນ ເປັນເວລາສິບສີ່ຊົ່ວຄົນ ແລະນັບຕັ້ງ-

ແຕ່ຄາວຖືກກວາດໄປຍັງກຸງ ບາບີໂລນ ຈົນເຖິງ ພຣະຄຣິດ ເປັນເວລາສິບສີ່ຊົ່ວຄົນ.

## ພຣະກຳເນີດຂອງພຣະເຢຊູຄຣິດ

*(ລກ 2:1-7)*

18 ເລື່ອງ ພຣະກຳເນີດ ຂອງ ພຣະເຢຊູຄຣິດ ເປັນດັ່ງນີ້: ຄືນາງ ມາຣີອາ ຜູ້ເປັນ ມານດາຂອງ
ພຣະເຢຊູ ນັ້ນ ໄດ້ເປັນຄູ່ໝັ້ນກັບ ໂຢເຊັບ ແລ້ວ ກ່ອນເວລາເຂົາໄດ້ເປັນຄູ່ຜົວເມຍກັນກໍປະກົດວ່າ
ນາງມີທ້ອງແລ້ວດ້ວຍລິດເດດ ພຣະວິນຍານບໍລິສຸດ. 19 ຝ່າຍ ໂຢເຊັບ ຜູ້ເປັນຄູ່ໝັ້ນຂອງນາງເປັນ
ຄົນມີສິນທຳ ແຕ່ປານນັ້ນເພິ່ນບໍ່ຢາກໃຫ້ເລື່ອງນີ້ເປັນທີ່ອັບອາຍຂາຍໜ້າແກ່ນາງ ຈຶ່ງຕັດສິນໃຈ
ວ່າຈະຖອນໝັ້ນເສຍຢ່າງລັບໆ. 20 ແຕ່ເມື່ອ ໂຢເຊັບ ຍັງຄຶດໃນເລື່ອງນີ້ຢູ່ ກໍມີເທວະດາຕົນໜຶ່ງ
ຂອງ ພຣະຜູ້ເປັນເຈົ້າ ມາປະກົດແກ່ ໂຢເຊັບ ໃນຄວາມຝັນວ່າ, "ໂຢເຊັບ ບຸດ ດາວິດ ເອີຍ, ຢ່າຊູ່
ຢ້ານທີ່ຈະຮັບນາງ ມາຣີອາ ມາເປັນເມຍຂອງເຈົ້າ ເພາະວ່າຜູ້ຊຶ່ງປະຕິສົນທິໃນທ້ອງຂອງນາງກໍ
ເປັນ ໂດຍ ເດດ ພຣະວິນຍານບໍລິສຸດ. 21 ນາງຈະປະສູດບຸດ ແລ້ວເຈົ້າຈົ່ງຖວາຍນາມທ່ານວ່າ
'ເຢຊູ' ເພາະວ່າທ່ານຜູ້ນີ້ແຫລະ, ຈະເປັນຜູ້ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບ
ຂອງເຂົາ." 22 ການທັງປວງນີ້ເກີດຂຶ້ນເພື່ອຈະໃຫ້ສຳເລັດ ຕາມທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງກ່າວໄວ້
ດ້ວຍຜູ້ປະກາດພຣະທຳວ່າ. 23 "ເບິ່ງແມ, ຍິງພົມຈະລີນັ້ນຈະມີທ້ອງ ແລະປະສູດບຸດຄົນໜຶ່ງ,
ແລະເຂົາຈະເອີ້ນຊື່ບຸດນັ້ນວ່າ 'ເອມານູເອນ'" (ແປວ່າ "ພຣະເຈົ້າ ຊົງສະຖິດຢູ່ກັບ ເຮົາທັງ-
ຫລາຍ"). 24 ເມື່ອ ໂຢເຊັບ ຕື່ນຂຶ້ນກໍເຮັດຕາມຄຳທີ່ເທວະດາຂອງ ພຣະຜູ້ເປັນເຈົ້າ ສັ່ງນັ້ນ ຄືຮັບ
ເອົານາງ ມາຣີອາ ມາເປັນພັນລະຍາຂອງຕົນ. 25 ແຕ່ບໍ່ໄດ້ສົມສູ່ຢູ່ກັບນາງຈົນປະສູດບຸດຊາຍແລ້ວ
ແລະ ໂຢເຊັບ ໄດ້ເອີ້ນຊື່ບຸດນັ້ນວ່າ "ເຢຊູ".

# ບົດທີ 2

## ພວກໂຫລາຈານມາຈາກທິດຕາເວັນອອກ

1 ເມື່ອ ພຣະເຢຊູ ຊົງປະສູດຢູ່ບ້ານ ເບັດເລເຮັມ ແຂວງ ຢູດາຍ ໃນ ສະໄໝຂອງກະສັດ ເຮໂຣດ
ເບິ່ງແມ, ມີພວກໂຫລາຈານຈາກທິດຕາເວັນອອກມາຍັງກຸງ ເຢຣູຊາເລັມ. 2 ຖາມວ່າ, "ກຸມມານຜູ້
ເກີດມາເປັນກະສັດຂອງຊາດຢິວນັ້ນຢູ່ທີ່ໃດ ເພາະເຮົາໄດ້ເຫັນດາວຂອງທ່ານປະກົດຂຶ້ນ[ກ] ເຮົາ
ຈຶ່ງມາເພື່ອຈະຂາບໄຫວ້ທ່ານ." 3 ຄັນກະສັດ ເຮໂຣດ ຊົງໄດ້ຍິນດັ່ງນີ້ແລ້ວກໍວຸ່ນວາຍພຣະໄທ ທັງ
ໄທກຸງ ເຢຣູຊາເລັມ ກໍພ້ອມກັນວຸ່ນວາຍດ້ວຍ. 4 ເມື່ອກະສັດຊົງຮັບສັ່ງໃຫ້ປະຊຸມບັນດາປະໂລຫິດ
ຕົນໃຫຍ່ກັບພວກນັກທຳຂອງປະຊາຊົນ ພຣະອົງຈຶ່ງຊົງຖາມເຂົາວ່າ, "ຜູ້ເປັນ ພຣະຄຣິດ ນັ້ນຈະ
ບັງເກີດຢູ່ທີ່ໃດ." 5 ເຂົາທູນຕອບວ່າ, "ໃນບ້ານ ເບັດເລເຮັມ ແຂວງ ຢູດາຍ ເພາະຜູ້ປະກາດພຣະ-
ທຳໄດ້ຂຽນໄວ້ດັ່ງນີ້ວ່າ,

6 'ບ້ານ ເບັດເລເຮັມ ໃນແຜ່ນດິນ ຢູດາຍ ເອີຍ
　　ເຈົ້າກໍບໍ່ແມ່ນຜູ້ເລັກນ້ອຍທີ່ສຸດ
　ໃນຖ້າມກາງພວກເຈົ້ານາຍຂອງ ຢູດາຍ

---

[ກ] ຫລື "ເຫັນດາວຂອງເພິ່ນທາງທິດຕາເວັນອອກ."

ເພາະວ່າເຈົ້ານາຍຜູ້ໜຶ່ງຈະອອກມາຈາກເຈົ້າ
ຜູ້ຊຶ່ງຈະປົກຄອງ ອິສຣາເອນ ໄພ່ພົນຂອງເຮົາ'."

7ແລ້ວ ເຮໂຣດ ໄດ້ຊົງເອີ້ນພວກໂຫລາຈານເຂົ້າມາເປັນການລັບ ຊົງຖາມເຂົາໄດ້ຄວາມຖ້ວນຖີ່
ເຖິງເວລາທີ່ດາວນັ້ນໄດ້ປະກົດຂຶ້ນ. 8ແລ້ວກະສັດໄດ້ຊົງໃຊ້ພວກໂຫລາຈານໄປຍັງບ້ານ ເບັດເລ-
ເຮັມ ສັ່ງວ່າ, "ຈົ່ງໄປຄົ້ນຫາກຸມມານນັ້ນດ້ວຍຄັກແນ່ ເມື່ອພົບແລ້ວຈົ່ງກັບມາບອກເຮົາເພື່ອເຮົາ
ຈະໄດ້ໄປຂາບໄຫວ້ທ່ານເໝືອນກັນ." 9ເມື່ອພວກໂຫລາຈານໄດ້ຍິນຄຳສັ່ງດັ່ງນີ້ກໍພາກັນອອກໄປ
ເບິ່ງແມ, ດາວທີ່ເຂົາໄດ້ເຫັນເມື່ອປະກົດຂຶ້ນນັ້ນກໍໄດ້ນຳໜ້າເຂົາໄປ ຈົນມາຢຸດຢູ່ຊື່ສະຖານທີ່
ກຸມມານຢູ່ນັ້ນ. 10ເມື່ອພວກໂຫລາຈານໄດ້ເຫັນດາວນັ້ນແລ້ວກໍມີຄວາມຊົມຊື່ນຍິນດີອັນໃຫຍ່.
11ຄັນເຂົ້າໄປໃນເຮືອນກໍພົບກຸມມານກັບນາງ ມາຣີອາ ມານດາຂອງເພິ່ນ ພວກເຂົາຈຶ່ງກົ້ມລົງຂາບ
ໄຫວ້ກຸມມານນັ້ນ ແລ້ວໄຂຫີບເອົາຊັບຂອງເຂົາອອກມາຖວາຍແກ່ກຸມມານເປັນເຄື່ອງໂຄລົບ ຄື
ຄຳ, ກຳຍານ, ແລະຢາງໄມ້ຫອມ. 12ພຣະເຈົ້າຊົງເຕືອນເຂົາທາງຄວາມຝັນບໍ່ໃຫ້ກັບໄປເຝົ້າ ເຮ-
ໂຣດ ດັ່ງນັ້ນເຂົາຈຶ່ງກັບໄປຍັງເມືອງຂອງຕົນໂດຍທາງອື່ນ.

## ໂຢເຊັບພາກຸມມານໄປປະເທດເອຢິບ

13ເມື່ອເຂົາໄປແລ້ວ ເບິ່ງແມ, ມີເທວະດາຕົນໜຶ່ງຂອງ ພຣະຜູ້ເປັນເຈົ້າ ໄດ້ມາປະກົດແກ່ໂຢ-
ເຊັບ ທາງຄວາມຝັນ ແລ້ວກ່າວວ່າ, "ຈົ່ງລຸກຂຶ້ນພາກຸມມານ ແລະມານດາໜີໄປຍັງປະເທດ ເອຢິບ
ແລ້ວຄອຍຢູ່ທີ່ນັ້ນຈົນກວ່າເຮົາຈະບອກເຈົ້າ ເພາະວ່າເຮໂລດຈະຊອກຫາກຸມມານ ເພື່ອຈະປະ-
ຫານຊີວິດເສຍ." 14ໂຢເຊັບ ໄດ້ລຸກຂຶ້ນແລ້ວພາກຸມມານແລະມານດາໜີໄປຍັງປະເທດ ເອຢິບ ໃນ
ເວລາກາງຄືນ ແລະໄດ້ຢູ່ທີ່ນັ້ນຈົນເຮໂລດສິ້ນພຣະຊົນແລ້ວ. 15ການທີ່ເກີດຂຶ້ນດັ່ງນີ້ກໍເພື່ອຈະ
ໃຫ້ສຳເລັດ ຕາມທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງກ່າວໄວ້ໂດຍຜູ້ປະກາດພຣະທຳວ່າ, "ເຮົາໄດ້ເອີ້ນບຸດ
ຂອງເຮົາອອກມາຈາກປະເທດ ເອຢິບ."

## ການປະຫານຊີວິດພວກເດັກນ້ອຍ

16ຄັນ ເຮໂຣດ ຊົງເຫັນວ່າພວກໂຫລາຈານຫລອກລວງຕົນກໍຊົງຮ້າຍຫລາຍ ຈຶ່ງໃຊ້ຄົນໄປຂ້າ
ເດັກນ້ອຍຜູ້ຊາຍທັງໝົດໃນບ້ານ ເບັດເລເຮັມ ແລະທີ່ໃກ້ຄຽງທົ່ວໄປ ຕັ້ງແຕ່ອາຍຸສອງຂວບລົງມາ
ຊຶ່ງພໍດີກັບເວລາທີ່ກະສັດຊົງຊາບຈາກພວກໂຫລາຈານນັ້ນ. 17ເມື່ອນັ້ນກໍສຳເລັດຕາມທີ່ຊົງກ່າວ
ໄວ້ໂດຍ ເຢເຣມີຢາ ຜູ້ປະກາດພຣະທຳວ່າ,

18 "ໄດ້ຍິນສຽງໃນບ້ານ ຣາມາ
ເປັນສຽງຮ້ອງໄຫ້ແລະສຽງໂອຍຮ່ຳໄຮ
ຄືນາງ ຣາເຄນ ຮ້ອງໄຫ້ນຳລູກທັງຫລາຍຂອງຕົນ
ນາງບໍ່ຮັບຟັງຄວາມເລົ້າໂລມເພາະລູກນັ້ນບໍ່ມີແລ້ວ."

## ໂຢເຊັບພາກຸມມານກັບຄືນແຜ່ນດິນອິສຣາເອນ

19ຄັນ ເຮໂຣດ ສິ້ນພຣະຊົນແລ້ວ ມີເທວະດາຕົນໜຶ່ງຂອງ ພຣະຜູ້ເປັນເຈົ້າ ມາປະກົດ ແກ່ ໂຢ-
ເຊັບ ທາງຄວາມຝັນທີ່ປະເທດ ເອຢິບ. 20ສັ່ງວ່າ, "ຈົ່ງລຸກຂຶ້ນພາກຸມມານກັບມານດາໄປຍັງ
ແຜ່ນດິນ ອິສຣາເອນ ເພາະຜູ້ທີ່ຊອກຫາຈະປະຫານຊີວິດກຸມມານນັ້ນຕາຍແລ້ວ." 21ໂຢເຊັບ ຈຶ່ງ

ລຸກຂຶ້ນພາກຸມມານກັບມານດາມາຍັງແຜ່ນດິນອິສຣາເອນ. 22ແຕ່ເມື່ອໄດ້ຍິນຂ່າວວ່າ ອາເຄລາວ
ໄດ້ຂຶ້ນປົກຄອງແຂວງຢູດາຍ ແທນ ເຮໂຣດຜູ້ເປັນບິດາ ໂຢເຊັບກໍຢ້ານບໍ່ກ້າໄປທີ່ນັ້ນ ແລະເມື່ອ
ໄດ້ຮັບຄຳເຕືອນຈາກພຣະເຈົ້າທາງຄວາມຝັນ ໂຢເຊັບກໍເລີຍໄປຍັງແຂວງຄາລີເລ. 23ຈຶ່ງໄປອາ
ໃສຢູ່ເມືອງໜຶ່ງຊື່ ນາຊາເຣັດ ເພື່ອຈະສຳເລັດຕາມທີ່ຊົງກ່າວໄວ້ໂດຍຜູ້ປະກາດພຣະທຳວ່າ,
"ທ່ານຈະຖືກເອີ້ນວ່າ 'ໄທນາຊາເຣັດ'."

# ບົດທີ 3

## ການປະກາດຂອງໂຢຮັນບັບຕິສະໂຕ

*(ມຣກ 1:1-8; ລກ 3:1-9, 15-17; ຢຮ 1:19-28)*

1ຄາວນັ້ນໂຢຮັນບັບຕິສະໂຕມາປະກາດໃນປ່າແຂວງຢູດາຍວ່າ, 2"ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່
ເພາະວ່າລາຊະອານາຈັກສະຫວັນໄດ້ມາໃກ້ແລ້ວ." 3ແມ່ນ ໂຢຮັນ ຜູ້ນີ້ແຫລະທີ່ ເອຊາຢາ ຜູ້ປະ-
ກາດພຣະທຳໄດ້ກ່າວໄວ້ວ່າ,

"ສຽງຂອງຜູ້ຮ້ອງໃນປ່າວ່າ
'ຈົ່ງຈັດແຈງທາງແຫ່ງພຣະຜູ້ເປັນເຈົ້າ
ຈົ່ງເຮັດຫົນທາງຂອງພຣະອົງໃຫ້ຊື່ໄປ'."

4ໂຢຮັນຜູ້ນີ້ນຸ່ງເສື້ອຜ້າເຮັດດ້ວຍຂົນໂອດໂອ, ໃຊ້ສາຍໜັງຮັດແອວ, ອາຫານຂອງເພິ່ນຄື
ຕັກແຕນແລະນໍ້າເຜີ້ງປ່າ. 5ຂະນະນັ້ນໄທກຸງ ເຢຣູຊາເລັມ ແລະຄົນທົ່ວແຂວງຢູດາຍ ແລະຄົນ
ທັງປວງທີ່ຢູ່ຕາມລຳນໍ້າຢໍແດນກໍອອກໄປຫາໂຢຮັນ. 6ພວກເຂົາໄດ້ສາລະພາບຄວາມຜິດບາບ
ຂອງຕົນ ແລະໄດ້ຮັບບັບຕິສະມາຈາກໂຢຮັນໃນແມ່ນໍ້າຢໍແດນ.

7ຄັນ ໂຢຮັນ ເຫັນພວກ ຟາຣິຊາຍ ແລະພວກຊາດູກາຍ ພາກັນມາຈຳນວນຫລວງຫລາຍເພື່ອ
ຈະຮັບບັບຕິສະມາ ເພິ່ນຈຶ່ງກ່າວແກ່ເຂົາວ່າ, "ອ້າຍຊາດງູຮ້າຍເຮີຍ, ໃຜໄດ້ບອກສູໃຫ້ປົບໜີ
ຈາກພຣະພິໂລດທີ່ຈວນຈະມາເຖິງນັ້ນ. 8ເຫດສັນນັ້ນຈົ່ງປະຕິບັດໃຫ້ໄດ້ຜົນສົມກັບການຖິ້ມໃຈ
ເກົ່າເອົາໃຈໃໝ່. 9ແລະຢ່າຕັ້ງນຶກໃນໃຈວ່າ 'ພວກເຮົາມີອັບຣາຮາມເປັນພໍ່ເຖົ້າ' ເພາະເຮົາບອກ
ພວກສູວ່າພຣະເຈົ້າຊົງລິດອາດຈະບັນດານໃຫ້ລູກຫລານເກີດຂຶ້ນແກ່ອັບຣາຮາມຈາກກ້ອນຫີນ
ເຫລົ່ານີ້ກໍໄດ້. 10ບັດນີ້ຂວານວາງໄວ້ທີ່ເຫງົ້າຕົ້ນໄມ້ແລ້ວ ສັນນັ້ນໄມ້ທຸກຕົ້ນທີ່ບໍ່ເກີດຜົນດີຈະຖືກ
ປ້ຳແລ້ວໂຍນຖິ້ມໃສ່ໄຟເສຍ.

11"ຝ່າຍເຮົາ, ເຮົາໃຫ້ພວກສູຮັບບັບຕິສະມາດ້ວຍນໍ້າ ໝາຍເຖິງການຖິ້ມໃຈເກົ່າເອົາໃຈໃໝ່ກໍ
ແມ່ນ ແຕ່ຜູ້ທີ່ຈະມາພາຍຫລັງເຮົາກໍມີລິດກວ່າເຮົາອີກ, ຊຶ່ງເຮົາບໍ່ສົມຄວນຈະຈັບເກີບຂອງເພິ່ນ
ໄປ ຝ່າຍຜູ້ນັ້ນຈະໃຫ້ພວກສູຮັບບັບຕິສະມາດ້ວຍພຣະວິນຍານບໍລິສຸດ ແລະດ້ວຍໄຟ. 12ມືຂອງ
ຜູ້ນັ້ນຖືດົ້ງຟັດເຂົ້າ ເພິ່ນຈະເຮັດລານເຂົ້າຂອງຕົນໃຫ້ກ້ຽງດີ ແລະຈະຮວບຮວມເຂົ້າເມັດດີຂອງ
ຕົນມາໃສ່ໄວ້ໃນເລົ້າ ແຕ່ເຂົ້າລີບນັ້ນ ເພິ່ນຈະເຜົາເສຍດ້ວຍໄຟທີ່ບໍ່ຮູ້ມອດ."

## ພຣະເຢຊູຊົງຮັບບັບຕິສະມາ

*(ມຣກ 1:9-11; ລກ 3:21-22)*

13ແລ້ວ ພຣະເຢຊູ ໄດ້ສະເດັດຈາກແຂວງ ຄາລີເລ ມາຫາ ໂຢຮັນ ທີ່ແມ່ນ້ຳຢໍແດນ ເພື່ອຈະຮັບ
ບັບຕິສະມາຈາກເພິ່ນ. 14ແຕ່ ໂຢຮັນ ທູນຫ້າມພຣະອົງວ່າ, "ຂ້ານ້ອຍຕ້ອງການຈະຮັບບັບຕິສະມາ
ຈາກທ່ານ ແລ້ວທ່ານຈະມາຫາຂ້ານ້ອຍຫລື." 15ແຕ່ ພຣະເຢຊູ ຊົງຕອບ ໂຢຮັນ ວ່າ, "ບັດນີ້ຈົ່ງ
ຍອມເທີ້ນ ເພາະສົມຄວນທີ່ເຮົາຈະເຮັດຢ່າງນີ້ໃຫ້ຖືກກັບຄວາມຊອບທຳທຸກປະການ" ແລ້ວ ໂຢ-
ຮັນ ກໍຍອມ. 16ຄັນພຣະອົງຊົງຮັບບັບຕິສະມາ ແລ້ວກໍສະເດັດຂຶ້ນຈາກນ້ຳທັນທີ ແລ້ວເບິ່ງແມ,
ທ້ອງຟ້າກໍໄຂອອກ [ແກ່ພຣະອົງ] ແລະພຣະອົງຊົງເຫັນ ພຣະວິນຍານ ຂອງ ພຣະເຈົ້າ ເໝືອນດັ່ງ
ນົກເຂົາສະເດັດລົງມາສະຖິດຢູ່ເທິງພຣະອົງ. 17ແລະເບິ່ງແມ, ມີພຣະສຸລະສຽງຈາກຟ້າສະຫວັນ
ຊົງກ່າວວ່າ, "ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ, ເຮົາຊອບໃຈຫລາຍໃນທ່ານ."

# ບົດທີ 4

## ມານທົດລອງພຣະເຢຊູ

*(ມຣກ 1:12-13; ລກ 4:1-13)*

1ຕໍ່ມາ ພຣະວິນຍານ ໄດ້ຊົງພາ ພຣະເຢຊູ ເຂົ້າໄປໃນປ່າ ເພື່ອພະຍາມານຈະໄດ້ທົດລອງພຣະ-
ອົງ. 2ເມື່ອພຣະອົງຊົງອົດອາຫານເປັນເວລາສີ່ສິບວັນສີ່ສິບຄືນ ແລ້ວຫລັງຈາກນັ້ນພຣະອົງກໍຊົງ
ຢາກອາຫານ. 3ສ່ວນຜູ້ທົດລອງມາຫາພຣະອົງທູນວ່າ, "ຖ້າທ່ານເປັນ ພຣະບຸດ ຂອງ ພຣະເຈົ້າ
ຈົ່ງສັ່ງກ້ອນຫີນ ເຫລົ່ານີ້ໃຫ້ກາຍເປັນອາຫານ." 4ຝ່າຍພຣະອົງຊົງຕອບວ່າ, "ມີຄຳຂຽນໄວ້ໃນ
ພຣະຄຳພີວ່າ 'ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວ ແຕ່ລ້ຽງດ້ວຍພຣະທຳທຸກຂໍ້ທີ່ອອກມາ
ຈາກ ພຣະ ໂອດ ຂອງ ພຣະເຈົ້າ'." 5ແລ້ວ ພະຍາມານ ກໍພາ ພຣະອົງ ໄປຍັງ ນະຄອນ ອັນ ສັກສິດ
ແລະໃຫ້ພຣະອົງປະທັບຢູ່ເທິງຫລັງຄາພຣະວິຫານ. 6ແລ້ວທູນພຣະອົງວ່າ, "ຖ້າທ່ານເປັນ ພຣະ-
ບຸດ ຂອງ ພຣະເຈົ້າ ຈົ່ງ ໂຕນລົງເບິ່ງດູ ເພາະມີຄຳຂຽນໄວ້ໃນພຣະຄຳພີວ່າ, 'ພຣະເຈົ້າ ຈະຊົງຮັບ
ສັ່ງ ພວກ ເທວະດາ ຂອງ ພຣະອົງ ກ່ຽວກັບ ເລື່ອງ ທ່ານ ແລະ'ມືຂອງ ເທວະດາ ເຫລົ່ານັ້ນ ຈະຮັບທ່ານ
ໄວ້ຢ້ານວ່າຕີນຂອງທ່ານຈະຕຳຫີນ'." 7ພຣະເຢຊູ ຊົງຕອບວ່າ, "ມີຄຳຂຽນໄວ້ໃນພຣະຄຳພີອີກ
ວ່າ, 'ຢ່າທົດລອງພຣະອົງຜູ້ເປັນ ພຣະເຈົ້າ ຂອງທ່ານ'." 8ອີກເທື່ອໜຶ່ງພະຍາມານໄດ້ພາພຣະອົງ
ຂຶ້ນເມືອເທິງພູສູງໆ ແລະໄດ້ສະແດງບັນດາລາຊະແຜ່ນດິນໃນໂລກ ທັງສະຫງ່າລາສີຂອງລາ-
ຊະແຜ່ນດິນເຫລົ່ານັ້ນຊີ້ໃຫ້ພຣະອົງເຫັນ. 9ແລ້ວໄດ້ທູນພຣະອົງວ່າ, "ຖ້າທ່ານຈະຂາບລົງໄຫວ້
ເຮົາ ເຮົາຈະເອົາສິ່ງເຫລົ່ານີ້ໃຫ້ແກ່ທ່ານ." 10ພຣະເຢຊູ ຊົງຕອບມັນວ່າ, "ອ້າຍຊາຕານ ເຮີຍ, ຈົ່ງ
ໜີໄປເສຍ ເພາະມີຄຳຂຽນໄວ້ໃນພຣະຄຳພີວ່າ, 'ຈົ່ງຂາບໄຫວ້ພຣະອົງຜູ້ເປັນ ພຣະເຈົ້າ ຂອງເຈົ້າ
ແລະປະຕິບັດພຣະອົງແຕ່ຜູ້ດຽວ'." 11ແລ້ວພະຍາມານຈຶ່ງໜີຈາກພຣະອົງໄປ ແລະເບິ່ງແມ, ມີ
ພວກເທວະດາມາປະຕິບັດຮັບໃຊ້ພຣະອົງ.

## ພຣະເຢຊູຊົງຕັ້ງຕົ້ນປ່າວປະກາດໃນແຂວງຄາລີເລ

*(ມຣກ 1:14-15; ລກ 4:14-15)*

12ຄັນ ພຣະເຢຊູ ຊົງຊາບຂ່າວວ່າ ໂຢຮັນ ຖືກຈັບໄວ້ແລ້ວ ພຣະອົງກໍສະເດັດອອກໄປຍັງແຂວງ
ຄາລີເລ. 13ແລ້ວຍ້າຍທີ່ປະທັບຈາກເມືອງ ນາຊາເຣັດ ໄປຢູ່ເມືອງ ກາເປນາອູມ ຊຶ່ງຢູ່ຮີມທະເລ-
ສາບໃນເຂດແດນ ເຊບູລູນ ແລະ ນັບທາລີ. 14ເພື່ອພຣະທຳທີ່ຊົງກ່າວໄວ້ດ້ວຍ ເອຊາຢາຜູ້ປະກາດ
ພຣະທຳຈະໄດ້ສຳເລັດຄື.

15 “ແຂວງ ເຊບູລູນ ແລະແຂວງ ນັບທາລີ
ຕາມທາງທະເລຟາກແມ່ນ້ຳຢໍແດນພຸ້ນ
ຄືແຂວງ ຄາລີເລ ແຫ່ງບັນດາປະຊາຊາດ.
16 ພົນລະເມືອງຜູ້ນັ່ງຢູ່ໃນຄວາມມືດ
ໄດ້ເຫັນຄວາມສະຫວ່າງອັນໃຫຍ່
ແລະຜູ້ທີ່ນັ່ງຢູ່ໃນແດນແລະເງົາແຫ່ງຄວາມຕາຍ
ແສງສະຫວ່າງກໍສ່ອງຂຶ້ນເທິງເຂົາແລ້ວ.”

17ຕັ້ງແຕ່ນັ້ນມາ ພຣະເຢຊູ ຊົງຕັ້ງຕົ້ນປ່າວປະກາດວ່າ, “ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ເພາະລາຊະ
ອານາຈັກສະຫວັນໄດ້ມາໃກ້ແລ້ວ.”

## ພຣະເຢຊູຊົງເອີ້ນເອົາສາວົກສີ່ຄົນ

*(ມຣກ 1:16-20; ລກ 5:1-11)*

18ຂະນະທີ່ພຣະອົງສະເດັດລຽບຕາມແຄມທະເລສາບ ຄາລີເລ ກໍຊົງທອດພຣະເນດເຫັນອ້າຍ
ນ້ອງສອງຄົນ ຄືຊີໂມນ ທີ່ເອີ້ນວ່າ ເປໂຕ ກັບ ອັນເດອາ ນ້ອງຊາຍຂອງຕົນ ກຳລັງຖິ້ມມອງລົງນ້ຳ
ທະເລ ເພາະວ່າເຂົາເປັນຊາວຫາປາ. 19ພຣະອົງຊົງກ່າວກັບເຂົາວ່າ, “ຈົ່ງຕາມເຮົາມາແລະເຮົາ
ຈະບັນດານໃຫ້ພວກເຈົ້າເປັນຜູ້ຫາຄົນ.” 20ໃນທັນໃດນັ້ນເຂົາກໍປະມອງ ແລ້ວຕາມພຣະອົງໄປ.
21ເມື່ອພຣະອົງສະເດັດຕໍ່ໄປກໍທອດພຣະເນດເຫັນອ້າຍນ້ອງອີກສອງຄົນ ຄືຢາໂກໂບ ລູກ ເຊເບ-
ດາຍ ກັບ ໂຢຮັນ ນ້ອງຊາຍຂອງຕົນ ກຳລັງຜູງມອງຢູ່ໃນເຮືອກັບ ເຊເບດາຍ ພໍ່ຂອງເຂົາພຣະອົງ
ໄດ້ຊົງເອີ້ນເອົາເຂົາ. 22ໃນທັນໃດນັ້ນເຂົາທັງສອງກໍປະເຮືອແລະລາພໍ່ຂອງເຂົາຕາມພຣະອົງໄປ.

## ພຣະເຢຊູຊົງໂຜດປວງຊົນໃຫ້ດີພະຍາດ

*(ລກ 6:17-19)*

23ພຣະເຢຊູ ໄດ້ສະເດັດໄປທົ່ວ ແຂວງ ຄາລີເລ ຊົງສັ່ງສອນໃນ ໂຮງທຳມະເທດສະໜາຂອງ
ເຂົາ ຊົງປະກາດຂ່າວປະເສີດເລື່ອງລາຊະອານາຈັກນັ້ນ ແລະຊົງ ໂຜດພົນລະເມືອງທີ່ເຈັບໄຂ້ໄດ້
ພະຍາດທຸກຢ່າງໃຫ້ດີໝົດ. 24ກິດຕິສັບຂອງພຣະອົງກໍຊ່າລືໄປທົ່ວປະເທດຊີເຣຍ ເຂົາຈຶ່ງພາຄົນ
ປ່ວຍໄຂ້ໄດ້ພະຍາດຕ່າງໆ, ຄົນທີ່ທົນທຸກທໍລະມານ, ຄົນທີ່ຜີເຂົ້າສິງ, ຄົນບ້າໝູແລະຄົນເປັນ
ເປ້ຍມາຫາພຣະອົງ ພຣະອົງກໍຊົງ ໂຜດໃຫ້ເຂົາດີທຸກຄົນ. 25ແລະມີຄົນໝູ່ໃຫຍ່ມາຈາກແຂວງ
ຄາລີເລ, ຈາກແຂວງ ເດກາໂປລີ, ຈາກກຸງ ເຢຣູຊາເລັມ ແລະຈາກແມ່ນ້ຳຢໍແດນ ຟາກນັ້ນຕິດ-
ຕາມພຣະອົງໄປ.

# ບົດທີ 5

## ພຣະເຢຊູຊົງຕັ້ງຕົ້ນເທດສະໜາຢູ່ຈ້າຍພູ ເລື່ອງຄວາມສຸກ

*(ລກ 6:20-23)*

[1]ເມື່ອທອດພຣະເນດເຫັນຄົນຫລວງຫລາຍດັ່ງນັ້ນ ພຣະອົງກໍສະເດັດຂຶ້ນພູເມື່ອປະທັບລົງ
ແລ້ວພວກສາວົກກໍເຂົ້າມາເຝົ້າ. [2]ພຣະອົງຈຶ່ງຊົງໄຂພຣະໂອດ[ກ] ຕັ້ງຕົ້ນສັ່ງສອນເຂົາວ່າ,

3 "ຜູ້ໃດທີ່ຍາກຈົນຝ່າຍຈິດວິນຍານກໍເປັນສຸກ
ເພາະວ່າແຜ່ນດິນສະຫວັນເປັນຂອງຜູ້ນັ້ນ.
4 ຜູ້ໃດໂສກເສົ້າກໍເປັນສຸກ
ເພາະວ່າຜູ້ນັ້ນຈະໄດ້ຮັບການຊົງເລົ້າໂລມ.
5 ຜູ້ໃດມີໃຈອ່ອນຫວານກໍເປັນສຸກ
ເພາະວ່າຜູ້ນັ້ນຈະໄດ້ຮັບແຜ່ນດິນໂລກເປັນມໍລະດົກ.
6 ຜູ້ໃດອຶດຫິວຄວາມຊອບທຳກໍເປັນສຸກ
ເພາະວ່າພຣະເຈົ້າຈະຊົງໃຫ້ອີ່ມບໍລິບູນ.
7 ຜູ້ໃດມີໃຈກະລຸນາກໍເປັນສຸກ
ເພາະວ່າຜູ້ນັ້ນຈະໄດ້ຮັບພຣະກະລຸນາຕອບ.
8 ຜູ້ໃດມີໃຈບໍລິສຸດກໍເປັນສຸກ
ເພາະວ່າຜູ້ນັ້ນຈະໄດ້ເຫັນພຣະເຈົ້າ.
9 ຜູ້ໃດສ້າງຄວາມສະຫງົບສຸກກໍເປັນສຸກ
ເພາະພຣະເຈົ້າຈະຊົງເອີ້ນຜູ້ນັ້ນວ່າເປັນບຸດ.
10 ຜູ້ໃດຖືກຂົ່ມເຫງເພາະເຫັນແກ່ຄວາມຊອບທຳກໍເປັນສຸກ
ເພາະວ່າແຜ່ນດິນສະຫວັນເປັນຂອງຜູ້ນັ້ນ.
11 "ເມື່ອເຂົາຈະຕິຕຽນຂົ່ມເຫງນິນທາວ່າຮ້າຍທ່ານທັງຫລາຍ
ເປັນຄວາມບໍ່ຈິງທຸກຢ່າງ ເພາະເຫັນແກ່ເຮົາ ພວກທ່ານກໍເປັນສຸກ.
12 ຈົ່ງຊົມຊື່ນຍິນດີ ເພາະວ່າບຳເໜັດຂອງທ່ານທັງຫລາຍມີບໍລິບູນໃນສະຫວັນ
ເໝືອນດັ່ງນັ້ນແຫລະ, ເຂົາໄດ້ຂົ່ມເຫງຜູ້ປະກາດພຣະທຳທີ່ຢູ່ກ່ອນທ່ານທັງຫລາຍ.

## ເລື່ອງເກືອແລະຄວາມສະຫວ່າງ

*(ມຣກ 9:50; ລກ 14:34-35)*

[13]"ທ່ານທັງຫລາຍຄືເກືອສຳລັບໂລກ ແຕ່ຖ້າເກືອນັ້ນຈືດຈາງໄປແລ້ວ ຈະເຮັດໃຫ້ກັບເຄັມອີກ
ໄດ້ຢ່າງໃດ ແຕ່ນັ້ນໄປກໍບໍ່ມີປະໂຫຍດອັນໃດ ມີແຕ່ຈະຖິ້ມເສຍໃຫ້ຄົນຢຽບເທົ່ານັ້ນ. [14]"ພວກ
ທ່ານຄືແສງສະຫວ່າງສຳລັບໂລກ ເມືອງທີ່ຕັ້ງຢູ່ເທິງພູຈະບັງລັບໄວ້ບໍ່ໄດ້. [15]ບໍ່ທ່ອນມີຜູ້ໃດເມື່ອ
ໄຕ້ໂຄມແລ້ວເອົາບຸງມາກວມ ແຕ່ເຄີຍຕັ້ງໄວ້ເທິງຮອງຕີນໂຄມແລະມັນສ່ອງແຈ້ງໄປທົ່ວທຸກຄົນ

---

[ກ]ຄຳວ່າ ໄຂພຣະໂອດນີ້ ກໍເຄີຍໃຊ້ເພື່ອແນະນຳຂໍ້ຄວາມສຳຄັນ (ເບິ່ງ ກຈກ 8:35)

ທີ່ຢູ່ໃນເຮືອນນັ້ນ. [16]ເໝືອນຢ່າງນັ້ນແຫລະ, ພວກທ່ານຈົ່ງສ່ອງແຈ້ງແກ່ຄົນທັງປວງ ເພື່ອວ່າ,
ເມື່ອເຂົາເຫັນການດີທີ່ພວກທ່ານເຮັດເຂົາຈະໄດ້ສັນລະເສີນ ພຣະບິດາ ຂອງພວກທ່ານຜູ້ຊົງສະ-
ຖິດຢູ່ໃນສະຫວັນ.

## ເລື່ອງພຣະບັນຍັດ

[17]"ຢ່າຄຶດວ່າເຮົາມາລຶບລ້າງພຣະບັນຍັດ ແລະຖ້ອຍຄຳຂອງຜູ້ປະກາດພຣະທຳເສຍ ເຮົາບໍ່
ໄດ້ມາລຶບລ້າງ ແຕ່ມາເຮັດໃຫ້ສຳເລັດຄົບຖ້ວນ. [18]ເຮົາບອກທ່ານທັງຫລາຍຕາມຈິງວ່າ ຕາບໃດ
ຟ້າແລະດິນຍັງຕັ້ງຢູ່ ແມ່ນແຕ່ຈຸດຫລືຂີດໃດໆ ກໍຈະບໍ່ສູນໄປຈາກພຣະບັນຍັດຈົນກວ່າສິ່ງທັງ
ປວງນັ້ນຈະໄດ້ເກີດຂຶ້ນຄົບຖ້ວນ. [19]ເຫດສັນນັ້ນຜູ້ໃດໄດ້ເຮັດໃຫ້ຂໍ້ເລັກນ້ອຍທີ່ສຸດໃນບັນດາຄຳ
ສັ່ງນີ້ເບົາບາງລົງ ທັງສອນຄົນອື່ນໃຫ້ເຮັດຢ່າງນັ້ນດ້ວຍ ພຣະເຈົ້າ ຈະຊົງເອີ້ນຜູ້ນັ້ນວ່າຜູ້ນ້ອຍທີ່
ສຸດໃນແຜ່ນດິນສະຫວັນ ແຕ່ຜູ້ໃດທີ່ປະຕິບັດແລະສອນຕາມພຣະບັນຍັດ ພຣະເຈົ້າ ຈະຊົງເອີ້ນຜູ້
ນັ້ນວ່າຜູ້ໃຫຍ່ໃນແຜ່ນດິນສະຫວັນ. [20]ເພາະເຮົາບອກທ່ານທັງຫລາຍວ່າ ຖ້າການຖືສິນທຳຂອງ
ທ່ານບໍ່ລື່ນກວ່າການຖືສິນທຳຂອງພວກນັກທຳແລະພວກ ຟາຣີຊາຍ ພວກທ່ານຈະເຂົ້າໄປໃນ
ແຜ່ນດິນສະຫວັນບໍ່ໄດ້ຈັກເທື່ອ.

## ເລື່ອງຄວາມຄຽດຮ້າຍ

*(ລກ 12:57-59)*

[21]"ທ່ານທັງຫລາຍໄດ້ຍິນຄຳຊຶ່ງກ່າວໄວ້ແກ່ຄົນບູຮານວ່າ 'ຢ່າຂ້າຄົນ ຖ້າຜູ້ໃດຂ້າຄົນ ຜູ້ນັ້ນ
ຈະຕ້ອງຖືກພິພາກສາລົງໂທດ'. [22]ແຕ່ຝ່າຍເຮົາ ເຮົາບອກພວກທ່ານວ່າ ຜູ້ໃດຮ້າຍອ້າຍນ້ອງ
ຂອງຕົນ ຜູ້ນັ້ນຈະຕ້ອງຖືກໂທດ ຜູ້ໃດຈະເວົ້າແກ່ອ້າຍນ້ອງຂອງຕົນວ່າ 'ອ້າຍໂງ່' ຜູ້ນັ້ນຈະຖືກ
ພິພາກສາລົງໂທດຈາກສານສູງ ຜູ້ໃດຈະເວົ້າວ່າ 'ອ້າຍບ້າ' ຜູ້ນັ້ນຈະມີໂທດເຖິງໄຟນະລົກ.
[23]ດັ່ງນັ້ນ, ເມື່ອທ່ານກຳລັງນຳເຄື່ອງຖວາຍມາເຖິງແທ່ນບູຊາ ແລ້ວລະນຶກຂຶ້ນໄດ້ວ່າ ທ່ານມີຂໍ້
ຂຸ່ນເຄືອງກັບອ້າຍນ້ອງຂອງຕົນດ້ວຍເລື່ອງໃດເລື່ອງໜຶ່ງ. [24]ຈົ່ງວາງເຄື່ອງບູຊາໄວ້ຕໍ່ໜ້າແທ່ນ
ນັ້ນກັບໄປຄືນດີກັບອ້າຍນ້ອງຜູ້ນັ້ນເສຍກ່ອນ ແລ້ວຈຶ່ງມາຖວາຍເຄື່ອງບູຊາຂອງທ່ານ. [25]ຈົ່ງຮີບ
ປອງດອງກັບຄູ່ໂຈດຂອງຕົນ ໃນຂະນະທີ່ຍັງຢູ່ກາງທາງນຳກັນ ຢ້ານວ່າໂຈດນັ້ນຈະມອບທ່ານ
ໄວ້ກັບຕຸລາການ ແລະຕຸລາການຈະມອບທ່ານໄວ້ກັບທຳມະໂຮງ ແລ້ວທ່ານຈະໄດ້ຖືກຂັງໄວ້ໃນ
ຄຸກ. [26]ເຮົາບອກແກ່ທ່ານຕາມຄວາມຈິງວ່າ ທ່ານຈະອອກຈາກທີ່ນັ້ນບໍ່ໄດ້ຈົນກວ່າຈະໄດ້ໃຊ້ໜີ້
ຈົນຄົບທຸກອັດ.

## ເລື່ອງການຫລິ້ນຊູ້

[27]"ທ່ານທັງຫລາຍໄດ້ຍິນຄຳທີ່ກ່າວໄວ້ວ່າ 'ຢ່າຫລິ້ນຊູ້ສູ່ຜົວເມຍທ່ານ' [28]ແຕ່ຝ່າຍເຮົາ, ເຮົາ
ບອກທ່ານທັງຫລາຍວ່າ ຜູ້ໃດເບິ່ງແມ່ຍິງດ້ວຍໃຈກຳໜັດໃນຍິງນັ້ນ ຜູ້ນັ້ນໄດ້ຫລິ້ນຊູ້ໃນໃຈກັບ
ຍິງນັ້ນແລ້ວ. [29]ຖ້າຕາເບື້ອງຂວາຂອງທ່ານເຮັດໃຫ້ຕົວຫລົງຜິດ ຈົ່ງຄວັດອອກຖິ້ມເສຍ ເພາະ
ການທີ່ເສຍອະໄວຍະວະສ່ວນໜຶ່ງກໍດີກວ່າໝົດທັງຕົວຈະຖືກຖິ້ມລົງໃນໝໍ້ນະລົກ. [30]ແລະຖ້າມື
ເບື້ອງຂວາຂອງທ່ານເຮັດໃຫ້ຫລົງຜິດ ຈົ່ງຕັດຖິ້ມເສຍ ເພາະການທີ່ເສຍອະໄວຍະວະສ່ວນໜຶ່ງກໍ
ດີກວ່າໝົດທັງຕົວຈະຕ້ອງຕົກໃນໝໍ້ນະລົກ.

## ເລື່ອງການຢ່າຮ້າງ

*(ມທ 19:9; ມຣກ 10:11-12; ລກ 16:18)*

31"ຍັງມີຄຳກ່າວໄວ້ວ່າ 'ຖ້າຜູ້ໃດຈະປະຮ້າງເມຍຂອງຕົນ ກໍໃຫ້ເຮັດໜັງສືຢ່າຮ້າງໃຫ້ເມຍ
ນັ້ນ'. 32ແຕ່ຝ່າຍເຮົາ, ເຮົາບອກທ່ານທັງຫລາຍວ່າ ຖ້າຜູ້ໃດຈະປະເມຍຂອງຕົນເພາະເຫດອື່ນ
ນອກຈາກການຜິດກັບຊາຍອື່ນ ກໍທໍ່ກັບວ່າຜູ້ນັ້ນເຮັດໃຫ້ຍິງນັ້ນຖືກຜິດໃນຖານຫລິ້ນຊູ້ ແລະຖ້າຜູ້
ໃດຈະຮັບຍິງຊຶ່ງປະຮ້າງຢ່າງນັ້ນມາເປັນເມຍຜູ້ນັ້ນກໍຖືກຜິດໃນຖານຫລິ້ນຊູ້ເໝືອນກັນ.

## ເລື່ອງການສາບານ

33"ອີກປະການໜຶ່ງ ທ່ານທັງຫລາຍໄດ້ຍິນຄຳທີ່ກ່າວໄວ້ແກ່ຄົນບູຮານວ່າ 'ຢ່າເສຍຄຳສັດສາ
ບານ ຄຳສາບານທີ່ທ່ານຖວາຍຕໍ່ອົງພຣະຜູ້ເປັນເຈົ້າແລ້ວຕ້ອງຮັກສາໄວ້ໃຫ້ໝັ້ນ'. 34ແຕ່ຝ່າຍ
ເຮົາ, ເຮົາບອກທ່ານທັງຫລາຍວ່າ ຢ່າສາບານເລີຍ ໂດຍອ້າງເຖິງສະຫວັນກໍດີ, ເພາະສະຫວັນ
ເປັນລາຊະບັນລັງຂອງພຣະເຈົ້າ. 35ຫລືໂດຍອ້າງເຖິງແຜ່ນດິນໂລກກໍດີ ເພາະແຜ່ນດິນໂລກ
ເປັນທີ່ຮອງພຣະບາດຂອງພຣະອົງ ຫລືໂດຍອ້າງເຖິງກຸງເຢຣູຊາເລັມກໍດີ ເພາະກຸງເຢຣູຊາເລັມ
ເປັນທີ່ປະທັບຂອງພຣະມະຫາກະສັດ. 36ຢ່າສາບານໂດຍອ້າງເຖິງຫົວຂອງຕົນ ເພາະທ່ານຈະ
ເຮັດໃຫ້ຜົມຂາວຫລືດຳຈັກເສັ້ນດຽວກໍບໍ່ໄດ້. 37ແຕ່ຈົ່ງໃຫ້ຖ້ອຍຄຳຂອງພວກທ່ານເປັນດັ່ງນີ້
'ແມ່ນ' ກໍວ່າ 'ແມ່ນ' 'ບໍ່ແມ່ນ' ກໍວ່າ 'ບໍ່ແມ່ນ' ເພາະຄຳເວົ້າເກີນນີ້ໄປມາຈາກຄວາມຊົ່ວ[ກ] .

## ເລື່ອງການຕອບແທນແກ້ແຄ້ນ

*(ລກ 6:29-30)*

38"ພວກທ່ານໄດ້ຍິນຄຳທີ່ກ່າວໄວ້ວ່າ, 'ຕາແທນຕາ ແລະແຂ້ວແທນແຂ້ວ'. 39ຝ່າຍເຮົາ, ເຮົາ
ບອກທ່ານທັງຫລາຍວ່າ ຢ່າຕໍ່ສູ້ກັບຄົນຊົ່ວ ແຕ່ຖ້າຜູ້ໃດຕົບແກ້ມເບື້ອງຂວາຂອງທ່ານ ຈົ່ງປິ່ນ
ແກ້ມເບື້ອງຊ້າຍໃຫ້ຜູ້ນັ້ນເໝືອນກັນ. 40ຖ້າຜູ້ໃດຢາກຟ້ອງເອົາເສື້ອຊັ້ນໃນຂອງທ່ານໄປ ກໍຈົ່ງໃຫ້
ເສື້ອຊັ້ນນອກແກ່ເພິ່ນເໝືອນກັນ. 41ຖ້າຜູ້ໃດຈະເກນທ່ານໃຫ້ຍ່າງໄປໜຶ່ງຫລັກ ກໍໃຫ້ທ່ານໄປກັບ
ເພິ່ນເຖິງສອງຫລັກ. 42ຖ້າຜູ້ໃດຈະຂໍນຳທ່ານກໍຈົ່ງໃຫ້ ຢ່າປິ່ນຫລັງໃສ່ຜູ້ທີ່ຢາກຢືມຈາກທ່ານ.

## ເລື່ອງຄວາມຮັກຕໍ່ສັດຕູ

*(ລກ 6:27-28, 32-36)*

43ທ່ານທັງຫລາຍໄດ້ຍິນຄຳທີ່ກ່າວໄວ້ວ່າ 'ຈົ່ງຮັກເພື່ອນບ້ານແລະຊັງສັດຕູ' 44ແຕ່ຝ່າຍເຮົາ,
ເຮົາບອກທ່ານທັງຫລາຍວ່າ ຈົ່ງຮັກສັດຕູຂອງທ່ານ ຈົ່ງອ້ອນວອນສຳລັບຜູ້ທີ່ຂົ່ມເຫງທ່ານ.
45ເພື່ອທ່ານທັງຫລາຍຈະເກີດເປັນບຸດຂອງພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສະຫວັນ
ເພາະພຣະອົງຊົງບັນດານໃຫ້ດວງຕາເວັນຂອງພຣະອົງຂຶ້ນສ່ອງສະຫວ່າງໃສ່ຄົນຊົ່ວແລະຄົນດີ
ແລະຊົງໃຫ້ຝົນຕົກໃສ່ຄົນສິນທຳກັບຄົນບໍ່ມີສິນທຳສະເໝີກັນ. 46ຖ້າແມ່ນວ່າທ່ານຮັກຄົນທັງ-
ຫລາຍທີ່ຮັກທ່ານ ທ່ານຈະໄດ້ຮັບບຳເໜັດອັນໃດ ເຖິງພວກເກັບພາສີກໍຍັງເຮັດຢ່າງນັ້ນບໍ່ແມ່ນ
ຫລື. 47ຖ້າທ່ານຄຳນັບພີ່ນ້ອງຂອງຕົນແຕ່ຝ່າຍດຽວ ທ່ານໄດ້ເຮັດສິ່ງໃດລື່ນຄົນອື່ນທັງປວງເຖິງ
ຄົນຕ່າງຊາດກໍຍັງເຮັດຢ່າງນັ້ນບໍ່ແມ່ນຫລື. 48ເຫດສັນນັ້ນທ່ານທັງຫລາຍຕ້ອງເປັນຄົນດີທີ່ສຸດ

[ກ]ຫລືວ່າ "ມາຈາກມານຮ້າຍ."

ເໝືອນຢ່າງ ພຣະບິດາ ຂອງທ່ານຜູ້ຊົງສະຖິດຢູ່ໃນສະຫວັນຊົງເປັນຜູ້ດີທີ່ສຸດ.

# ບົດທີ 6

## ເລື່ອງການທານ

[1]“ຈົ່ງລະວັງໃຫ້ດີ ຢ່າຖືສິນກິນທານເພື່ອອວດຄົນອື່ນ ເພາະຖ້າເຮັດຢ່າງນັ້ນທ່ານຈະບໍ່ໄດ້ຮັບ
ບຳເໜັດຈາກ ພຣະບິດາ ຂອງທ່ານຜູ້ຊົງສະຖິດຢູ່ໃນສະຫວັນ. [2]“ເຫດສັນນັ້ນ ເມື່ອທ່ານໃຫ້ທານ
ຢ່າເປົ່າແກໄປກ່ອນໜ້າທ່ານ ເໝືອນດັ່ງຄົນໜ້າຊື່ໃຈຄົດເຄີຍເຮັດໃນໂຮງທຳມະເທດສະໜາແລະ
ຕາມຖະໜົນ ເພື່ອໃຫ້ມະນຸດສັນລະເສີນ ເຮົາບອກພວກທ່ານຕາມຄວາມຈິງວ່າ, ເຂົາໄດ້ຮັບບຳ-
ເໜັດແລ້ວ. [3]ຝ່າຍພວກທ່ານ, ເມື່ອໃຫ້ທານຢ່າໃຫ້ມືຊ້າຍຮູ້ການທີ່ມືຂວາກຳລັງເຮັດນັ້ນ. [4]ເພື່ອ
ທານຂອງທ່ານຈະໄດ້ເປັນການລັບ ແລະ ພຣະບິດາ ຂອງພວກທ່ານຜູ້ຊົງເຫັນໃນທີ່ລັບລີ້ຈະຊົງ
ໂຜດປະທານບຳເໜັດແກ່ທ່ານ.

## ເລື່ອງການອ້ອນວອນ

*(ລກ 11:2-4)*

[5]“ເມື່ອທ່ານທັງຫລາຍອ້ອນວອນຢ່າເປັນເໝືອນຄົນໜ້າຊື່ໃຈຄົດ ເພາະເຂົາຊອບຢືນອ້ອນ-
ວອນໃນໂຮງທຳມະເທດສະໜາແລະຕາມແຈຖະໜົນ ເພື່ອຈະໃຫ້ມະນຸດເຫັນ ເຮົາບອກທ່ານ
ທັງຫລາຍຕາມຄວາມຈິງວ່າ ເຂົາໄດ້ຮັບບຳເໜັດແລ້ວ. [6]ແຕ່ຝ່າຍທ່ານ, ເມື່ອຈະອ້ອນວອນຈົ່ງ
ເຂົ້າໄປໃນຫ້ອງ ຄັນອັດປະຕູແລ້ວ ຈົ່ງອ້ອນວອນ ພຣະບິດາ ຂອງທ່ານຜູ້ຊົງສະຖິດໃນທີ່ລັບລີ້
ແລ້ວ ພຣະບິດາ ຂອງທ່ານຜູ້ຊົງເຫັນໃນທີ່ລັບລີ້ ຈະຊົງໂຜດປະທານບຳເໜັດແກ່ທ່ານ. [7]“ແຕ່
ເມື່ອທ່ານອ້ອນວອນຢູ່ ຢ່າເວົ້າຊ້ຳຄຳເກົ່າເໝືອນຄົນຕ່າງຊາດເຄີຍເຮັດເພາະເຂົາຄຶດວ່າ ຖ້າເວົ້າ
ຫລາຍຄຳ ພຣະເຈົ້າ ຈະຊົງໂຜດຮັບຟັງ. [8]ສັນນັ້ນຢ່າເຮັດຄືເຂົາ ເພາະວ່າສິ່ງໃດທີ່ທ່ານຕ້ອງການ
ພຣະບິດາ ຂອງທ່ານກໍຊົງຊາບກ່ອນພວກທ່ານທູນຂໍ. [9]ເຫດສັນນີ້ພວກທ່ານຈົ່ງອ້ອນວອນຕາມ
ຢ່າງນີ້ວ່າ,

‘ຂ້າແດ່ ພຣະບິດາ ຂອງຂ້າພຣະອົງທັງຫລາຍ
ຜູ້ຊົງສະຖິດໃນສະຫວັນ
ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄລົບບູຊາ.
[10] ຂໍໃຫ້ພຣະລາຊະອານາຈັກຂອງພຣະອົງມາຕັ້ງຢູ່
ຂໍໃຫ້ເປັນໄປຕາມນ້ຳພຣະໄທຂອງພຣະອົງ
ໃນສະຫວັນເປັນຢ່າງໃດ ກໍໃຫ້ເປັນໄປຢ່າງນັ້ນທີ່ແຜ່ນດິນໂລກ.
[11] ຂໍຊົງໂຜດປະທານອາຫານປະຈຳວັນ
ໃຫ້ແກ່ຂ້າພຣະອົງທັງຫລາຍໃນກາລະວັນນີ້.
[12] ຂໍຊົງໂຜດຍົກໂທດໃຫ້ຂ້າພຣະອົງ
ເໝືອນຂ້າພຣະອົງຍົກໂທດ
ໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ.

13 ແລະຂໍຢ່າພາຂ້າພຣະອົງເຂົ້າໄປໃນການທົດລອງ
ແຕ່ຂໍຊົງໂຜດໃຫ້ພົ້ນຈາກການຊົ່ວຮ້າຍ[ກ]
[ເຫດວ່າລາຊະອານາຈັກ, ລິດອຳນາດ, ແລະພຣະລັດສະໝີ
ກໍເປັນຂອງພຣະອົງສືບໆໄປເປັນນິດ. ອາແມນ'.]
14ເພາະວ່າຖ້າທ່ານຍົກຄວາມຜິດຂອງເພື່ອນມະນຸດ ພຣະບິດາຂອງທ່ານຜູ້ຊົງສະຖິດໃນສະ-
ຫວັນຈະຊົງໂຜດຍົກຄວາມຜິດຂອງທ່ານດ້ວຍ. 15ແຕ່ຖ້າທ່ານບໍ່ຍົກຄວາມຜິດຂອງເພື່ອນມະນຸດ
ພຣະບິດາຂອງທ່ານກໍຈະບໍ່ຊົງໂຜດຍົກຄວາມຜິດຂອງທ່ານເໝືອນກັນ.

## ເລື່ອງສິນອົດອາຫານ

16"ເມື່ອທ່ານຖືສິນອົດອາຫານ ຢ່າເຮັດໜ້າເສົ້າໝອງເໝືອນຄົນໜ້າຊື່ໃຈຄົດ ດ້ວຍວ່າເຂົາ
ເຮັດໜ້າໝອງເພື່ອຈະໃຫ້ມະນຸດເຫັນວ່າເຂົາຖືສິນອົດອາຫານ ເຮົາບອກທ່ານທັງຫລາຍຕາມ
ຄວາມຈິງວ່າ ເຂົາໄດ້ຮັບບຳເໜັດແລ້ວ. 17ແຕ່ຝ່າຍທ່ານ, ເມື່ອຖືສິນອົດອາຫານ ຈົ່ງລ້າງໜ້າ
ແລະເອົານ້ຳມັນທາຫົວ. 18ເພື່ອຈະບໍ່ໃຫ້ມະນຸດເຫັນວ່າທ່ານຖືສິນອົດອາຫານ ແຕ່ໃຫ້ປະກົດແກ່
ພຣະບິດາຂອງທ່ານຜູ້ຊົງສະຖິດໃນທີ່ລັບລີ້ ແລະພຣະບິດາຂອງທ່ານຜູ້ຊົງເຫັນໃນທີ່ລັບລີ້ ກໍ
ຈະຊົງໂຜດປະທານບຳເໜັດແກ່ທ່ານ.

## ເລື່ອງຊັບສົມບັດໃນສະຫວັນ

*(ລກ 12:33-34)*

19"ຢ່າຮິບໂຮມຊັບສົມບັດໄວ້ສຳລັບຕົນໃນໂລກ ຊຶ່ງເປັນບ່ອນມອດແລະຂີ້ໝ້ຽງກັດກິນແລະ
ເປັນບ່ອນທີ່ໂຈນເຈາະເຂົ້າລັກເອົາໄດ້. 20ແຕ່ຈົ່ງຮິບໂຮມຊັບສົມບັດສຳລັບຕົນໄວ້ໃນສະຫວັນ
ບ່ອນມອດແລະຂີ້ໝ້ຽງກັດກິນບໍ່ໄດ້ ແລະທັງໂຈນເຈາະແລະລັກເອົາບໍ່ໄດ້. 21ເພາະວ່າຊັບສົມບັດ
ຂອງທ່ານຢູ່ທີ່ໃດ ໃຈຂອງທ່ານກໍຢູ່ທີ່ນັ້ນດ້ວຍ.

## ເລື່ອງຄວາມສະຫວ່າງຂອງຮ່າງກາຍ

*(ລກ 11:34-36)*

22"ຕາເປັນດວງສະຫວ່າງຂອງຮ່າງກາຍ ຖ້າຕາຂອງທ່ານປົກກະຕິດີ ຮ່າງກາຍທຸກສ່ວນກໍ
ສະຫວ່າງດີ. 23ແຕ່ຖ້າຕາຂອງທ່ານບໍ່ປົກກະຕິດີ ຮ່າງກາຍທຸກສ່ວນຂອງທ່ານກໍມືດໄປ ເຫດ
ສັນນັ້ນ, ຖ້າຄວາມສະຫວ່າງທີ່ຢູ່ໃນຕົວຂອງທ່ານມືດໄປ ຄວາມມືດນັ້ນຈະໜາທຶບພຽງໃດໜໍ.

## ເລື່ອງພຣະເຈົ້າແລະເງິນຄຳ

*(ລກ 16:13)*

24"ບໍ່ມີຜູ້ໃດສາມາດເປັນຂ້າສອງເຈົ້າບ່າວສອງນາຍໄດ້ ເພາະຈະຊັງນາຍຜູ້ນີ້ແລະໄປຮັກນາຍ
ຜູ້ນັ້ນ ຫລືຈະຕິດພັນກັບນາຍຜູ້ນີ້ແລະປະໝາດຜູ້ນັ້ນ ທ່ານຈະເປັນຂ້ອຍໃຊ້ຂອງພຣະເຈົ້າແລະ
ເປັນຂ້ອຍໃຊ້ຂອງເງິນຄຳພ້ອມກັນບໍ່ໄດ້.

---

[ກ]ຫລືວ່າ "ຈາກມານຮ້າຍ."

## ເລື່ອງຄວາມກະວົນກະວາຍ

*(ລກ 12:22-34)*

[25]“ດ້ວຍເຫດນັ້ນເຮົາຈຶ່ງບອກທ່ານທັງຫລາຍວ່າ ຢ່າກະວົນກະວາຍເຖິງຊີວິດຂອງຕົນວ່າ ຈະ
ກິນຫຍັງ ຈະດື່ມຫຍັງ ແລະຢ່າກະວົນກະວາຍເຖິງຮ່າງກາຍຂອງຕົນວ່າ ຈະນຸ່ງຫຍັງ ຊີວິດກໍ
ສິ່ນກວ່າອາຫານບໍ່ແມ່ນຫລື ແລະຮ່າງກາຍກໍສິ່ນກວ່າເຄື່ອງນຸ່ງຫົ່ມບໍ່ແມ່ນຫລື. [26]ຈົ່ງເບິ່ງນົກປ່າ
ມັນບໍ່ໄດ້ຫວ່ານ, ບໍ່ໄດ້ກ່ຽວ ບໍ່ໄດ້ເກັບໂຮມໃສ່ເລົ້າໄວ້ແຕ່ພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນ
ສະຫວັນກໍຍັງຊົງລ້ຽງນົກນັ້ນ ພວກທ່ານປະເສີດຫລາຍກວ່ານົກບໍ່ແມ່ນຫລື. [27]ມີໃຜໃນພວກທ່ານ
ໂດຍຄວາມກະວົນກະວາຍອາດຕໍ່ຊີວິດຂອງຕົນໃຫ້ຍາວອອກໄປອີກຈັກສອກໜຶ່ງໄດ້ຫລື. [28]ເປັນ
ສັນໃດ ທ່ານທັງຫລາຍຈຶ່ງກະວົນກະວາຍເຖິງເຄື່ອງນຸ່ງຫົ່ມ ຈົ່ງສັງເກດເບິ່ງດອກໄມ້ໃນທົ່ງວ່າ
ມັນຈະເລີນໃຫຍ່ຂຶ້ນຢ່າງໃດ ມັນບໍ່ໄດ້ເຮັດການ, ບໍ່ໄດ້ເຂັນຝ້າຍ. [29]ແຕ່ເຮົາບອກທ່ານທັງຫລາຍ
ວ່າ ເຖິງແມ່ນກະສັດໂຊໂລໂມນ, ເມື່ອບໍລິບູນດ້ວຍສະຫງ່າລາສີ ກໍບໍ່ໄດ້ຊົງເຄື່ອງງາມທໍ່ດອກໄມ້
ເຫລົ່ານີ້ດອກໜຶ່ງ. [30]ຖ້າພຣະເຈົ້າຊົງຕົກແຕ່ງຫຍ້າທີ່ທົ່ງຢ່າງນັ້ນ ຊຶ່ງເປັນຢູ່ມື້ນີ້ແລະມື້ໜ້າຕ້ອງ
ຖືກຖິ້ມໃສ່ເຕົາໄຟ ໂອຜູ້ມີຄວາມເຊື່ອນ້ອຍເອີຍ, ພຣະອົງຈະບໍ່ຊົງຕົກແຕ່ງທ່ານຫລາຍກວ່ານັ້ນ
ອີກຫລື. [31]ເຫດສັນນັ້ນຢ່າກະວົນກະວາຍວ່າ ‘ພວກເຮົາຈະກິນຫຍັງ, ຈະດື່ມຫຍັງ ຫລືຈະນຸ່ງ
ຫົ່ມຫຍັງ’. [32]ເພາະວ່າພວກຕ່າງຊາດສະແຫວງຫາສິ່ງຂອງທັງປວງນີ້ ແຕ່ວ່າພຣະບິດາຂອງ
ທ່ານທັງຫລາຍຜູ້ຊົງສະຖິດຢູ່ໃນສະຫວັນ ຊົງຊາບແລ້ວວ່າພວກທ່ານຕ້ອງການສິ່ງທັງປວງ
ເຫລົ່ານີ້. [33]ແຕ່ກ່ອນອື່ນ, ທ່ານທັງຫລາຍຈົ່ງສະແຫວງຫາລາຊະອານາຈັກຂອງພຣະເຈົ້າ ແລະ
ຄວາມຊອບທຳຂອງພຣະອົງ ແລະພຣະອົງຈະຊົງເພີ່ມເຕີມສິ່ງທັງປວງເຫລົ່ານີ້ໃຫ້ແກ່ທ່ານ.
[34]ເຫດສັນນັ້ນຢ່າກະວົນກະວາຍເຖິງມື້ອື່ນ ເພາະວ່າມື້ອື່ນຄົງມີການກະວົນກະວາຍສຳລັບມັນ
ເອງ ຄວາມທຸກໃນວັນໃດກໍພໍແລ້ວໃນວັນນັ້ນ.

# ບົດທີ 7

## ເລື່ອງການກ່າວໂທດຜູ້ອື່ນ

*(ລກ 6:37-38, 41-42)*

[1]“ຢ່າກ່າວໂທດໃສ່ເຂົາເພື່ອພຣະເຈົ້າຈະບໍ່ຊົງກ່າວໂທດໃສ່ທ່ານ. [2]ເພາະວ່າທ່ານຈະກ່າວ
ໂທດໃສ່ເຂົາຢ່າງໃດ ພຣະເຈົ້າຈະຊົງກ່າວໂທດໃສ່ທ່ານຢ່າງນັ້ນ ພວກທ່ານຈະຕວງໃຫ້ເຂົາ
ດ້ວຍເຄື່ອງຜອງອັນໃດ ພຣະເຈົ້າຈະຊົງຕວງໃຫ້ພວກທ່ານດ້ວຍເຄື່ອງຜອງອັນນັ້ນ. [3]ເປັນຫຍັງ
ທ່ານຈຶ່ງຫລຽວເຫັນຂີ້ເຫຍື້ອທີ່ຢູ່ໃນຕາພີ່ນ້ອງຂອງທ່ານ ແຕ່ໄມ້ທັງທ່ອນທີ່ຢູ່ໃນຕາຂອງຕົນທ່ານ
ບໍ່ຮູ້ສຶກ. [4]ຫລືເປັນສັນໃດທ່ານຈຶ່ງກ່າວແກ່ພີ່ນ້ອງຂອງທ່ານວ່າ ‘ໃຫ້ຂ້ອຍເຂ່ຍຂີ້ເຫຍື້ອອອກຈາກ
ຕາຂອງເຈົ້າ’ ແຕ່ເບິ່ງແມ, ໄມ້ທັງທ່ອນມີຢູ່ໃນຕາຂອງທ່ານເອງ. [5]ໂອ ຄົນໜ້າຊື່ໃຈຄົດເອີຍ ຈົ່ງ
ເອົາໄມ້ທັງທ່ອນອອກຈາກຕາຂອງທ່ານກ່ອນແລ້ວທ່ານຈະເຫັນໄດ້ຄັກ ຈຶ່ງຈະເຂ່ຍຂີ້ເຫຍື້ອອອກ
ຈາກຕາຂອງພີ່ນ້ອງຂອງຕົນໄດ້. [6]“ຢ່າເອົາຂອງປະເສີດໃຫ້ແກ່ໝາ ຢ່າໂຍນໄຂ່ມຸກໃສ່ຕໍ່ໜ້າໝູ
ຢ້ານວ່າມັນຈະຢຽບຢ່ຳເສຍແລະຈະຕ່າວມາຂົບຈີກທ່ານດ້ວຍ.

## ເລື່ອງການຂໍ, ການຊອກ, ແລະການເຄາະ

*(ລກ 11:9-13; 6:31)*

7“ຈົ່ງໝັ່ນຂໍແລ້ວຈະຊົງປະທານໃຫ້ ຈົ່ງໝັ່ນຊອກແລ້ວຈະພົບ ຈົ່ງໝັ່ນເຄາະແລ້ວຈະຊົງໄຂ
ໃຫ້. 8ເພາະວ່າທຸກຄົນທີ່ໝັ່ນຂໍກໍໄດ້ຮັບ ທຸກຄົນທີ່ໝັ່ນຊອກກໍພົບ ທຸກຄົນທີ່ໝັ່ນເຄາະກໍຊົງໄຂ
ໃຫ້. 9ໃນພວກທ່ານມີຜູ້ໃດແດ່ ຖ້າລູກຂໍເຂົ້າປັ້ນໜຶ່ງຈະບໍ່ໄດ້ເອົາກ້ອນຫີນໃຫ້ຕີ້. 10ຫລືຖ້າລູກຂໍ
ປາຈະບໍ່ໄດ້ເອົາງູໃຫ້ຕີ້. 11ເຫດສັນນັ້ນ ຖ້າພວກທ່ານຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່
ລູກຂອງຕົນ ຫລາຍກວ່ານັ້ນອີກຈັກເທົ່າໃດ ພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສະຫວັນ ຈະ
ຊົງປະທານຂອງດີແກ່ຜູ້ທີ່ຂໍຈາກພຣະອົງ. 12ດັ່ງນັ້ນສິ່ງໃດໆ ທີ່ທ່ານປາດຖະໜາໃຫ້ເຂົາເຮັດແກ່
ທ່ານ ທ່ານຈົ່ງເຮັດກັບເຂົາທຸກປະການເໝືອນກັນ ເພາະອັນນັ້ນຄືພຣະບັນຍັດແລະຄຳສັ່ງສອນ
ຂອງບັນດາຜູ້ປະກາດພຣະທຳ.

## ເລື່ອງປະຕູຄັບແຄບ

*(ລກ 13:24)*

13“ຈົ່ງເຂົ້າໄປທາງປະຕູຄັບແຄບ ເພາະວ່າປະຕູກໍກວ້າງແລະທາງກໍກວ້າງຂວາງທີ່ນຳໄປເຖິງ
ຄວາມຈິບຫາຍນັ້ນ ມີຫລາຍຄົນເຂົ້າໄປຕາມທາງນັ້ນ. 14ເພາະວ່າປະຕູທີ່ນຳໄປສູ່ຊີວິດກໍຄັບແລະ
ທາງກໍແຄບ ບໍ່ມີຫລາຍຄົນພົບທາງນັ້ນ.

## ເລື່ອງຮູ້ເຫດໄດ້ດ້ວຍຜົນ

*(ລກ 6:43-44)*

15“ພວກທ່ານຈົ່ງລະວັງຜູ້ປະກາດພຣະທຳບໍ່ຈິງ ທີ່ປອມຕົວຄືແກະມາຫາທ່ານ ແຕ່ພາຍໃນ
ເຂົາເປັນໝາໄນຕົວຮ້າຍ. 16ທ່ານຈະຮູ້ຈັກເຂົາໄດ້ດ້ວຍຜົນຂອງເຂົາ ເຂົາເຄີຍເກັບໝາກອະງຸ່ນ
ຈາກເຄືອມີໜາມຫລື ແລະເຂົາເຄີຍເກັບໝາກເດື່ອເທດຈາກຕົ້ນມີໜາມຫລື. 17ດັ່ງນັ້ນໄມ້ດີທຸກ
ຕົ້ນຍ່ອມເກີດຜົນດີ ແຕ່ຕົ້ນໄມ້ບໍ່ດີກໍເກີດຜົນບໍ່ດີ. 18ຕົ້ນໄມ້ດີຈະເກີດຜົນບໍ່ດີບໍ່ໄດ້ ຫລືຕົ້ນໄມ້ບໍ່ດີ
ຈະເກີດຜົນດີກໍບໍ່ໄດ້. 19ໄມ້ທຸກຕົ້ນທີ່ບໍ່ເກີດຜົນດີຕ້ອງຖືກປ້ຳຖິ້ມໃສ່ໄຟເສຍ. 20ເຫດສັນນັ້ນພວກ
ທ່ານຈະຮູ້ຈັກເຂົາໄດ້ດ້ວຍຜົນຂອງເຂົາ.

## ເລື່ອງການຊົງປະຕິເສດ

*(ລກ 13:25-27)*

21“ບໍ່ແມ່ນໝົດທຸກຄົນທີ່ກ່າວແກ່ເຮົາວ່າ, ‘ພຣະອົງເຈົ້າ, ພຣະອົງເຈົ້າ’ ຈະເຂົ້າໃນແຜ່ນດິນ
ສະຫວັນ ເຂົ້າໄດ້ແຕ່ຜູ້ທີ່ເຮັດຕາມນ້ຳພຣະໄທພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນ.
22ເມື່ອເຖິງວັນນັ້ນຈະມີຫລາຍຄົນຮ້ອງໃສ່ເຮົາວ່າ ‘ພຣະອົງເຈົ້າ, ພຣະອົງເຈົ້າ ພວກຂ້າພຣະອົງ
ໄດ້ປະກາດພຣະທຳໃນພຣະນາມຂອງພຣະອົງ ໄດ້ຂັບໄລ່ຜີອອກໃນພຣະນາມຂອງພຣະອົງ
ແລະໄດ້ເຮັດການອິດທິລິດຫລາຍປະການໃນພຣະນາມຂອງພຣະອົງບໍ່ແມ່ນຫລື’. 23ເມື່ອນັ້ນເຮົາ
ຈະໄດ້ປະກາດແກ່ເຂົາວ່າ ‘ເຮົາບໍ່ຮູ້ຈັກພວກເຈົ້າຈັກເທື່ອ ເຈົ້າຜູ້ເຮັດການຊົ່ວເຮີຍ, ຈົ່ງພ່າຍໜີໃຫ້
ພົ້ນຈາກເຮົາເສຍ’.

## ເລື່ອງຮາກຕຶກສອງຢ່າງ

*(ລກ 6:47-49)*

24"ເຫດສັນນັ້ນທຸກຄົນທີ່ຟັງຄຳເຫລົ່ານີ້ຂອງເຮົາແລະປະຕິບັດຕາມ ຄົນນັ້ນກໍປຽບເໝືອນຄົນ
ສະຫລາດທີ່ກໍ່ສ້າງຕຶກຂອງຕົນເທິງດານຫີນ. 25ຝົນກໍຕົກ, ນ້ຳກໍນອງ, ລົມກໍພັດປະທະຕຶກນັ້ນ
ແຕ່ຕຶກນັ້ນກໍບໍ່ພັງເພລົງ ເພາະຮາກມັນຕັ້ງຢູ່ເທິງຫີນ. 26ແຕ່ທຸກຄົນທີ່ໄດ້ຍິນຖ້ອຍຄຳເຫລົ່ານີ້
ຂອງເຮົາແລະບໍ່ປະຕິບັດຕາມ ຄົນນັ້ນກໍປຽບເໝືອນຄົນໂງ່ທີ່ກໍ່ສ້າງຕຶກຂອງຕົນເທິງຫາດຊາຍ.
27ຝົນກໍຕົກ, ນ້ຳກໍນອງ, ລົມກໍພັດປະທະຕຶກນັ້ນ ຕຶກນັ້ນກໍເພພັງລົງ ແລະການເພພັງຂອງມັນກໍ
ເປັນການໃຫຍ່ຫລວງ."

## ຊົງສັ່ງສອນດ້ວຍອຳນາດ

28ຢູ່ມາເມື່ອ ພຣະເຢຊູ ຊົງກ່າວຄຳເຫລົ່ານີ້ຈົບລົງແລ້ວ ປະຊາຊົນທັງປວງກໍປະຫລາດໃຈໃນ
ການສັ່ງສອນຂອງພຣະອົງ. 29ເພາະວ່າພຣະອົງຊົງສັ່ງສອນເຂົາເໝືອນຜູ້ມີລິດອຳນາດ ແລະບໍ່
ເໝືອນພວກນັກທຳຂອງເຂົາ.

# ບົດທີ 8

## ເລື່ອງຄົນຂີ້ທູດຜູ້ໜຶ່ງດີສະອາດ

*(ມຣກ 1:40-44: ລກ 5:12-16)*

1ເມື່ອພຣະອົງສະເດັດລົງມາຈາກພູແລ້ວ ປະຊາຊົນຫລວງຫລາຍໄດ້ຕິດຕາມພຣະອົງ. 2ແລະ
ເບິ່ງແມ, ມີຄົນຂີ້ທູດຜູ້ໜຶ່ງເຂົ້າມາຂາບລົງທູນພຣະອົງວ່າ, "ນາຍເອີຍ, ຖ້າທ່ານພໍໃຈກໍອາດຈະ
ເຮັດໃຫ້ຂ້ານ້ອຍດີສະອາດໄດ້." 3ພຣະອົງຈຶ່ງຊົງຢຽດພຣະຫັດອອກຖືກຄົນນັ້ນແລະຊົງກ່າວວ່າ,
"ເຮົາພໍໃຈແລ້ວ ຈົ່ງດີສະອາດເສຍ" ແລ້ວພະຍາດຂີ້ທູດຂອງຜູ້ນັ້ນກໍດີສະອາດທັນທີ. 4ຝ່າຍ
ພຣະເຢຊູ ຊົງກ່າວແກ່ຜູ້ນັ້ນວ່າ, "ລະວັງຢ່າບອກໃຫ້ຜູ້ໃດຟັງ ແຕ່ຈົ່ງໄປສະແດງຕົວຕໍ່ປະໂລຫິດ
ແລະຖວາຍເຄື່ອງບູຊາຕາມ ໂມເຊ ໄດ້ສັ່ງໄວ້ເພື່ອເປັນຫລັກຖານຕໍ່ເຂົາ."

## ຊົງໂຜດຄົນໃຊ້ຂອງນາຍຮ້ອຍ

*(ລກ 7:1-10; ຢຮ 4:43-54)*

5ຂະນະທີ່ພຣະອົງສະເດັດເຂົ້າໄປໃນເມືອງ ກາເປນາອູມ ມີນາຍຮ້ອຍທະຫານຜູ້ໜຶ່ງມາອ້ອນ-
ວອນພຣະອົງ. 6ທູນວ່າ, "ນາຍເອີຍ, ຄົນໃຊ້ຂອງຂ້ານ້ອຍເປັນເປ້ຍນອນຢູ່ເຮືອນທົນທຸກເວດ-
ທະນາຫລາຍ." 7ພຣະເຢຊູ ຊົງບອກກັບນາຍຮ້ອຍນັ້ນວ່າ, "ເຮົາຈະໄປຊ່ອຍໃຫ້ລາວດີ." 8ແຕ່
ຝ່າຍນາຍຮ້ອຍຜູ້ນັ້ນໄດ້ທູນຕອບວ່າ, "ຂ້ານ້ອຍເປັນຄົນບໍ່ສົມຄວນທີ່ຈະໃຫ້ທ່ານເຂົ້າໄປລຸ່ມຫລັງ-
ຄາເຮືອນຂອງຂ້ານ້ອຍ ແຕ່ຂໍທ່ານກ່າວເທົ່ານັ້ນຄົນໃຊ້ຂອງຂ້ານ້ອຍກໍຈະດີພະຍາດ. 9ເຫດວ່າ
ຂ້ານ້ອຍເປັນຄົນຢູ່ໃຕ້ວິໄນທະຫານ ແລະຍັງມີທະຫານຢູ່ໃຕ້ບັງຄັບບັນຊາຂອງຂ້ານ້ອຍອີກ ຂ້າ-
ນ້ອຍສັ່ງແກ່ຄົນນັ້ນວ່າ 'ໄປ' ມັນກໍໄປ ແລະສັ່ງຄົນນີ້ວ່າ 'ມາ' ມັນກໍມາ ແລະບອກແກ່ຄົນໃຊ້
ຂອງຂ້ານ້ອຍວ່າ 'ຈົ່ງເຮັດສິ່ງນີ້' ມັນກໍເຮັດ." 10ເມື່ອ ພຣະເຢຊູ ຊົງໄດ້ຍິນດັ່ງນັ້ນກໍປະຫລາດ
ພຣະໄທ, ຈຶ່ງຊົງກ່າວກັບຄົນທັງຫລາຍທີ່ຕິດຕາມພຣະອົງມາວ່າ, "ເຮົາບອກທ່ານທັງຫລາຍຕາມ

ຄວາມຈິງວ່າແມ່ນໃນພວກອິສຣາເອນ ເຮົາກໍບໍ່ໄດ້ພົບຄວາມເຊື່ອໃຫຍ່ທໍ່ນີ້. 11ເຮົາບອກທ່ານທັງ-
ຫລາຍວ່າ ຈະມີຫລາຍຄົນຈາກທິດຕາເວັນອອກແລະທິດຕາເວັນຕົກມານັ່ງຮ່ວມໂຕະກັບ ອັບຣາ-
ຮາມ, ອີຊາກ, ແລະຢາໂຄບ ໃນແຜ່ນດິນສະຫວັນ. 12ແຕ່ຝ່າຍຊາວແຜ່ນດິນນັ້ນຈະຖືກຖິ້ມອອກ
ໄປໃນທີ່ມືດພາຍນອກ ທີ່ນັ້ນຈະມີສຽງຮ້ອງໄຫ້ແລະຂົບແຂ້ວຢູ່.” 13ພຣະເຢຊູ ຊົງບອກແກ່ນາຍ-
ຮ້ອຍຜູ້ນັ້ນວ່າ, “ຈົ່ງກັບເມືອເສຍທ່ານໄດ້ເຊື່ອຢ່າງໃດກໍໃຫ້ເປັນແກ່ທ່ານຢ່າງນັ້ນ” ແລ້ວໃນໂມງ
ນັ້ນຄົນໃຊ້ຜູ້ນັ້ນກໍໄດ້ດີເປັນປົກກະຕິ.

## ຊົງໂຜດແມ່ເມຍຂອງເປໂຕ

*(ມຣກ 1:29-31; ລກ 4:38-41)*

14ເມື່ອ ພຣະເຢຊູ ໄດ້ສະເດັດເຂົ້າໄປໃນເຮືອນຂອງ ເປໂຕ ກໍຊົງເຫັນແມ່ເມຍຂອງ ເປໂຕ ນອນ
ໄຂ້ຢູ່. 15ພຣະອົງຊົງບາຍມືນາງ ແລະຄວາມໄຂ້ກໍຫາຍ ນາງຈຶ່ງລຸກຂຶ້ນບົວລະບັດພຣະອົງ.
16ແລະເມື່ອຄໍ່າມາ ເຂົາໄດ້ພາຄົນທີ່ມີຜີຮ້າຍສິງຢູ່ຫລາຍຄົນມາຫາພຣະອົງ ພຣະອົງກໍຊົງຂັບໄລ່
ຜີຮ້າຍເຫລົ່ານັ້ນອອກດ້ວຍຄໍາສັ່ງຂອງພຣະອົງ ແລະບັນດາຄົນເຈັບປ່ວຍທັງຫລາຍນັ້ນ ພຣະອົງ
ກໍໄດ້ຊົງໂຜດໃຫ້ດີ. 17ທັງນີ້ເພື່ອຈະໃຫ້ສໍາເລັດຕາມທີ່ຊົງກ່າວໄວ້ໂດຍ ເອຊາຢາ ຜູ້ປະກາດພຣະ-
ທໍາວ່າ,

> “ທ່ານໄດ້ແບກຄວາມເຈັບໄຂ້ຂອງພວກເຮົາ
> ແລະຫອບເອົາພະຍາດຂອງເຮົາໄປ.”

## ຜູ້ທີ່ສະໝັກຈະຕາມພຣະເຢຊູ

*(ລກ 9:47-62)*

18ຄັນ ພຣະເຢຊູ ຊົງເຫັນປະຊາຊົນຫລວງຫລາຍຢູ່ຮ່ວມຕົນ ກໍໄດ້ຊົງສັ່ງໃຫ້ຂ້າມໄປຟາກນັ້ນ.
19ມີນັກທໍາຜູ້ໜຶ່ງມາຫາພຣະອົງທູນວ່າ, “ອາຈານເອີຍ, ທ່ານຈະໄປທີ່ໃດຂ້ານ້ອຍຈະຕິດຕາມ
ທ່ານໄປທີ່ນັ້ນ.” 20ພຣະເຢຊູ ຊົງຕອບວ່າ, “ໝາຈິກຈອກກໍມີຮູ ແລະນົກປ່າກໍຍັງມີຮັງ ແຕ່ບຸດ
ມະນຸດບໍ່ມີບ່ອນຈະວາງຫົວລົງ.” 21ອີກຜູ້ໜຶ່ງໃນພວກສິດຂອງພຣະອົງມາທູນພຣະອົງວ່າ, “ນາຍ
ເອີຍ, ຂໍໂຜດອະນຸຍາດໃຫ້ຂ້ານ້ອຍໄປຝັງສົບພໍ່ຂອງຂ້ານ້ອຍເສຍກ່ອນ.” 22ແຕ່ ພຣະເຢຊູ ຊົງ
ຕອບວ່າ, “ຈົ່ງຕິດຕາມເຮົາມາເສຍ ແລະປະໃຫ້ຄົນຕາຍຝັງກັນເອງເທາະ.”

## ຊົງຫ້າມລົມແລະທະເລ

*(ມຣກ 4:35; ລກ 8:22-25)*

23ເມື່ອພຣະອົງສະເດັດລົງເຮືອ ພວກສິດຂອງພຣະອົງກໍຕິດຕາມພຣະອົງໄປ. 24ແລະເບິ່ງແມ,
ບັງເກີດມີການເຄື່ອນໄຫວອັນໃຫຍ່ທີ່ທະເລຈົນຟອງນໍ້າກໍາລັງຊັດຖ້ວມເຮືອ ແຕ່ພຣະອົງຊົງບັນ-
ທົມຫລັບຢູ່. 25ພວກສິດໄດ້ມາປຸກພຣະອົງທູນວ່າ, “ນາຍເອີຍ, ຂໍຈົ່ງຊ່ອຍທ້ອນ ພວກຂ້ານ້ອຍ
ກໍາລັງຈະຈົມຫາຍຢູ່ແລ້ວ.” 26ພຣະອົງຊົງກ່າວກັບເຂົາວ່າ, “ໂອ ຄົນມີຄວາມເຊື່ອນ້ອຍເອີຍ,
ເປັນຫຍັງພວກເຈົ້າຈຶ່ງຢ້ານ” ແລ້ວພຣະອົງຊົງລຸກຂຶ້ນຫ້າມລົມແລະທະເລ ລົມກໍເຊົາແລະຟອງ-
ນໍ້າກໍສະຫງົບງຽບທົ່ວໄປ. 27ຄົນເຫລົ່ານັ້ນກໍພາກັນອັດສະຈັນໃຈຈຶ່ງເວົ້າກັນວ່າ, “ທ່ານຜູ້ນີ້ມາ
ຈາກທີ່ໃດໜໍ ຈົນວ່າລົມແລະທະເລກໍຍອມຟັງເພິ່ນ.”

## ຊົງໂຜດຊາວຄາດາຣາຜູ້ມີຜີສິງ

*(ມຣກ 5:1-20; ລກ 8:26-29)*

[28]ເມື່ອພຣະອົງສະເດັດຂ້າມຟາກໄປເຖິງເຂດແດນຊາວຄາດາຣາ ມີສອງຄົນທີ່ມີຜີສິງຢູ່ອອກ
ຈາກປ່າຊ້າມາພົບພຣະອົງ ເຂົາໂຫດຮ້າຍປານນັ້ນຈົນບໍ່ມີຜູ້ໃດອາດທ່ຽວທາງນັ້ນໄດ້. [29]ເບິ່ງແມ,
ເຂົາຮ້ອງໃສ່ພຣະອົງທູນວ່າ, “ໂອ ບຸດພຣະເຈົ້າເອີຍ, ທ່ານມາຫຍຸ້ງກ່ຽວກັບເຮົາດ້ວຍເຫດໃດ
ຈະມາທໍລະມານເຮົາກ່ອນເວລາກຳນົດຫລື.” [30]ໄກຈາກທີ່ນັ້ນມີໝູຝູງໃຫຍ່ກຳລັງຫາກິນຢູ່. [31]ຜີ
ເຫລົ່ານັ້ນຈຶ່ງໄດ້ທູນຂໍພຣະອົງວ່າ, “ຖ້າທ່ານຂັບໄລ່ພວກເຮົາອອກ ກໍຂໍໃຫ້ພວກເຮົາເຂົ້າໄປສິງຢູ່
ໃນໝູຝູງນັ້ນທ້ອນ.” [32]ພຣະອົງຊົງບອກຜີເຫລົ່ານັ້ນວ່າ, “ໄປເສຍ” ຜີເຫລົ່ານັ້ນກໍອອກໄປເຂົ້າ
ສິງຢູ່ໃນຝູງໝູ ແລະເບິ່ງແມ, ໝູທັງຝູງນັ້ນໄດ້ຟ້າວແລ່ນລົງຈາກຕາຫລິ່ງຊັນໂຕນໃສ່ທະເລຕາຍ
ດົກນ້ຳໝົດ. [33]ຝ່າຍຄົນລ້ຽງໝູກໍພາກັນປົບໜີເຂົ້າໄປໃນເມືອງ ເລົ່າບັນດາການຊຶ່ງເປັນໄປນັ້ນ
ກັບເຫດທີ່ເກີດຂຶ້ນແກ່ຄົນທີ່ມີຜີສິງຢູ່. [34]ແລະເບິ່ງແມ, ຄົນທັງເມືອງກໍພາກັນອອກມາຫາພຣະ-
ເຢຊູ ເມື່ອພົບພຣະອົງແລ້ວເຂົາຈຶ່ງອ້ອນວອນທູນຂໍໃຫ້ພຣະອົງອອກໄປເສຍຈາກເຂດແດນຂອງ
ເຂົາ.

# ບົດທີ 9

## ພຣະເຢຊູຊົງໂຜດຄົນເປ້ຍ

*(ມຣກ 2:1:12; ລກ 5:17-26)*

[1]ຝ່າຍພຣະເຢຊູໄດ້ສະເດັດລົງເຮືອຂ້າມຟາກໄປຍັງເມືອງຂອງຕົນ. [2]ເບິ່ງແມ, ເຂົາຫາມຄົນ
ເປ້ຍຜູ້ໜຶ່ງຊຶ່ງນອນຢູ່ເທິງທີ່ນອນມາຫາພຣະອົງ ເມື່ອພຣະເຢຊູຊົງເຫັນຄວາມເຊື່ອຂອງເຂົາ ຈຶ່ງ
ຊົງກ່າວແກ່ຄົນເປ້ຍນັ້ນວ່າ, “ລູກເອີຍ, ຈົ່ງຊື່ນໃຈເທີນຜິດບາບຂອງເຈົ້າໄດ້ຮັບອະໄພແລ້ວ.”
[3]ແລະເບິ່ງແມ, ພວກນັກທຳບາງຄົນເວົ້າກັນວ່າ, “ຜູ້ນີ້ເວົ້າໝິ່ນປະໝາດພຣະເຈົ້າ.” [4]ຝ່າຍພຣະ-
ເຢຊູຊົງຊາບຄວາມຄຶດຂອງເຂົາຈຶ່ງຊົງກ່າວວ່າ, “ເຫດສັນໃດທ່ານທັງຫລາຍຈຶ່ງຄຶດຄວາມຊົ່ວໃນ
ໃຈ. [5]ທີ່ຈະວ່າ ‘ຜິດບາບຂອງເຈົ້າໄດ້ຮັບອະໄພແລ້ວ’ ຫລືຈະວ່າ ‘ຈົ່ງລຸກຂຶ້ນແລະຍ່າງທ່ຽວໄປ’
ອັນໃດຈະງ່າຍກວ່າກັນ. [6]ແຕ່ເພື່ອທ່ານທັງຫລາຍຈະໄດ້ຮູ້ວ່າ ບຸດມະນຸດມີສິດອຳນາດໃນໂລກ
ໃຫ້ອະໄພຄວາມຜິດບາບໄດ້...” ພຣະອົງຈຶ່ງຊົງກ່າວກັບຄົນເປ້ຍນັ້ນວ່າ, “ຈົ່ງລຸກຂຶ້ນຍົກເອົາ
ບ່ອນນອນຂອງເຈົ້າໄປບ້ານເສຍ.” [7]ຄົນເປ້ຍຈຶ່ງລຸກຂຶ້ນເມືອເຮືອນຂອງຕົນ. [8]ເມື່ອປະຊາຊົນ
ເຫັນດັ່ງນັ້ນກໍຢ້ານ ຈຶ່ງພາກັນສັນລະເສີນພຣະເຈົ້າຜູ້ຊົງປະທານສິດອຳນາດດັ່ງນັ້ນແກ່ມະນຸດ.

## ຊົງເອີ້ນເອົາມັດທາຍ

*(ມຣກ 2:13-17; ລກ 5:27-32)*

[9]ເມື່ອພຣະເຢຊູກຳລັງສະເດັດຈາກບ່ອນນັ້ນໄປ ພຣະອົງຊົງເຫັນຊາຍຜູ້ໜຶ່ງຊື່ມັດທາຍນັ່ງຢູ່
ດ່ານພາສີ ຈຶ່ງຊົງກ່າວແກ່ຜູ້ນັ້ນວ່າ, “ຈົ່ງຕາມເຮົາມາ” ເພິ່ນກໍລຸກຂຶ້ນຕາມພຣະອົງໄປ. [10]ເມື່ອ
ພຣະອົງປະທັບສະເຫວີຍອາຫານຢູ່ໃນເຮືອນ ເບິ່ງແມ, ມີຄົນເກັບພາສີແລະຄົນນອກສິນທຳ
ຫລາຍຄົນເຂົ້າມານັ່ງ ຮ່ວມໂຕະກັບພຣະເຢຊູແລະພວກສິດຂອງພຣະອົງ. [11]ເມື່ອພວກຟາຣິ-

ຊາຍ ເຫັນດັ່ງນັ້ນກໍພາກັນຖາມພວກສິດຂອງພຣະອົງວ່າ, "ເປັນຫຍັງອາຈານຂອງພວກເຈົ້າຈຶ່ງ
ຮັບປະທານອາຫານ ຮ່ວມກັບຄົນເກັບພາສີແລະຄົນນອກສິນທຳ." 12ສ່ວນພຣະອົງ ເມື່ອຊົງໄດ້
ຍິນດັ່ງນັ້ນແລ້ວຈຶ່ງຊົງກ່າວວ່າ, "ຄົນທີ່ສະບາຍບໍ່ຕ້ອງການໝໍຢາ ແຕ່ຄົນເຈັບກໍຕ້ອງການໝໍ.
13ແຕ່ທ່ານທັງຫລາຍຈົ່ງໄປຮຽນຂໍ້ນີ້ໃຫ້ເຂົ້າໃຈທີ່ວ່າ 'ເຮົາປະສົງຄວາມເມດຕາແລະບໍ່ປະສົງ
ເຄື່ອງບູຊາ' ດ້ວຍວ່າເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທຳ ແຕ່ມາເອີ້ນເອົາຄົນນອກສິນທຳ."

## ບັນຫາເລື່ອງການຖືສິນອົດອາຫານ

*(ມຣກ 2:18-22; ລກ 5:33-39)*

14ເມື່ອນັ້ນພວກສິດຂອງໂຢຮັນມາຫາພຣະເຢຊູທູນວ່າ, "ເຫດສັນໃດພວກຂ້ານ້ອຍແລະພວກ
ຟາຣີຊາຍເຄີຍຖືສິນອົດອາຫານຢູ່ເລື້ອຍ ແຕ່ພວກສິດຂອງທ່ານບໍ່ຖື." 15ພຣະເຢຊູຊົງຕອບເຂົາ
ວ່າ, "ເມື່ອເຈົ້າບ່າວຍັງຢູ່ກັບເຂົາ ເພື່ອນຂອງເຈົ້າບ່າວນັ້ນຈະໂສກເສົ້າບໍ່ໄດ້ຕີ້ ແຕ່ວັນໜຶ່ງຈະມາ
ເມື່ອເຈົ້າບ່າວຖືກຍົກຍ້າຍຈາກເຂົາໄປ ເມື່ອນັ້ນເຂົາຈະຖືສິນອົດອາຫານ. 16ບໍ່ທ່ອນມີຜູ້ໃດເອົາ
ຕ່ອນຜ້າໃໝ່ມາຕາບເສື້ອເກົ່າ ເພາະເມື່ອຕ່ອນຜ້າໃໝ່ຫົດກໍຈະຂາດອອກຈາກເສື້ອເກົ່າ ແລ້ວ
ບ່ອນຂາດນັ້ນຈະກວ້າງອອກຕື່ມ. 17ແລະເຂົາບໍ່ເອົາເຫລົ້າແວງໃໝ່ມາໃສ່ໄວ້ໃນຖົງໜັງເກົ່າ ຖ້າ
ເຮັດຢ່າງນັ້ນຖົງໜັງຈະຂາດແລະເຫລົ້າແວງຈະຮົ່ວອອກ ທັງຖົງໜັງກໍຈະເສຍໄປເໝືອນກັນ ແຕ່
ເຂົາເອົາເຫລົ້າແວງໃໝ່ໃສ່ໄວ້ໃນຖົງໜັງໃໝ່ ແລ້ວທັງສອງຢ່າງກໍຢູ່ດີດ້ວຍກັນ.

## ລູກສາວຂອງເຈົ້ານາຍແລະຍິງເລືອດຕົກ

*(ມຣກ 5:21-43; ລກ 8:40-56)*

18ເມື່ອພຣະອົງກຳລັງຊົງກ່າວຄຳເຫລົ່ານີ້ແກ່ເຂົາຢູ່ ເບິ່ງແມ, ມີເຈົ້ານາຍຜູ້ໜຶ່ງມາຂາບທູນ
ພຣະອົງວ່າ, "ລູກສາວຂອງຂ້ານ້ອຍຫາກໍຕາຍ ແຕ່ຂໍເຊີນທ່ານໄປວາງມືໃສ່ມັນ ແລ້ວມັນຈະຄືນ
ມີຊີວິດອີກ." 19ແລ້ວພຣະເຢຊູຊົງລຸກຂຶ້ນສະເດັດຕາມນາຍຜູ້ນັ້ນໄປພ້ອມດ້ວຍພວກສິດຂອງ
ພຣະອົງ. 20ແລະເບິ່ງແມ, ມີຜູ້ຍິງຄົນໜຶ່ງເປັນພະຍາດເລືອດຕົກໄດ້ສິບສອງປີມາແລ້ວ ນາງໄດ້
ຫຍັບເຂົ້າມາເບື້ອງຫລັງແລ້ວບາຍແຄມເຄື່ອງທົງຂອງພຣະອົງ. 21ເພາະນາງຄຶດໃນໃຈວ່າ, "ຖ້າ
ເຮົາໄດ້ບາຍແຕ່ເສື້ອຂອງເພິ່ນເທົ່ານັ້ນ ເຮົາກໍຈະດີພະຍາດ." 22ພຣະເຢຊູຊົງຫລຽວຫລັງທອດ
ພຣະເນດເຫັນຍິງນັ້ນ ແລ້ວຊົງກ່າວວ່າ, "ລູກຍິງເອີຍ, ຈົ່ງຊື່ນໃຈເທີນ ຄວາມເຊື່ອຂອງເຈົ້າໄດ້
ເຮັດໃຫ້ເຈົ້າດີແລ້ວ" ຕັ້ງແຕ່ຍາມນັ້ນນາງກໍດີປົກກະຕິ. 23ເມື່ອພຣະເຢຊູສະເດັດໄປເຖິງເຮືອນ
ນາຍຜູ້ນັ້ນ ກໍຊົງເຫັນພວກຄົນເປົ່າປີ່ກັບຝູງຄົນອຶກກະທຶກກັນຢູ່. 24ພຣະອົງຈຶ່ງຊົງກ່າວແກ່ເຂົາ
ວ່າ, "ຈົ່ງຖອຍອອກໄປເສຍ ດ້ວຍວ່າສາວນ້ອຍຄົນນີ້ບໍ່ໄດ້ຕາຍດອກ ແຕ່ຫລັບຢູ່ເທົ່ານັ້ນ" ແລ້ວ
ເຂົາພາກັນຫົວຂວັນພຣະອົງ. 25ເມື່ອຝູງຄົນໄດ້ຖືກຂັບໄລ່ອອກໝົດແລ້ວ ພຣະອົງໄດ້ສະເດັດ
ເຂົ້າໄປຈັບມືສາວນ້ອຍແລະສາວນ້ອຍນັ້ນກໍລຸກຂຶ້ນ. 26ແລ້ວກໍຕິສັບກໍຊ່າລືໄປທົ່ວແຂວງນັ້ນ.

## ຊົງໂຜດຄົນຕາບອດສອງຄົນ

27ເມື່ອພຣະເຢຊູສະເດັດຈາກບ່ອນນັ້ນໄປ ກໍມີຄົນຕາບອດສອງຄົນຕາມພຣະອົງໄປຮ້ອງຂຶ້ນ
ວ່າ, "ບຸດດາວິດເອີຍ, ໂຜດເມດຕາພວກຂ້ານ້ອຍແດ່ທ້ອນ." 28ເມື່ອພຣະອົງສະເດັດເຂົ້າໄປໃນ
ເຮືອນແລ້ວ ຄົນຕາບອດສອງຄົນນັ້ນກໍເຂົ້າມາຫາພຣະອົງ ພຣະເຢຊູຊົງຖາມເຂົາວ່າ, "ພວກ

ເຈົ້າເຊື່ອວ່າເຮົາອາດຈະເຮັດການນີ້ໄດ້ຫລື" ເຂົາກໍທູນພຣະອົງວ່າ, "ເຊື່ອຢູ່ທ່ານເອີຍ." 29ແລ້ວ
ພຣະອົງຊົງບາຍຕາຂອງເຂົາພ້ອມກັບຊົງກ່າວວ່າ, "ໃຫ້ເປັນໄປຕາມຄວາມເຊື່ອຂອງເຈົ້າ."
30ແລະຕາຂອງເຂົາກໍກັບເຫັນຮຸ່ງ ແລ້ວພຣະເຢຊູຊົງສັ່ງຫ້າມເຂົາຢ່າງແຂງແຮງວ່າ, "ຈົ່ງລະວັງ
ຢ່າໃຫ້ຜູ້ໃດຮູ້." 31ແຕ່ເມື່ອເຂົາຈາກບ່ອນນັ້ນໄປ ເຂົາກໍປະກາດເລື່ອງຂອງພຣະອົງໃຫ້ຊ່າລືທົ່ວ
ໄປໃນແຂວງນັ້ນ.

## ຊົງໂຜດຄົນປາກກືກ

32ໃນຂະນະທີ່ເຂົາກຳລັງອອກໄປ ມີຜູ້ພາຄົນປາກກືກຜູ້ໜຶ່ງທີ່ມີຜີສິງຢູ່ມາຫາພຣະອົງ. 33ເມື່ອ
ພຣະອົງຊົງຂັບໄລ່ຜີນັ້ນອອກແລ້ວ ຄົນປາກກືກກໍປາກໄດ້ ຝູງຄົນທັງຫລາຍກໍອັດສະຈັນໃຈເວົ້າ
ກັນວ່າ, "ບໍ່ເຄີຍປະກົດເຫັນການດັ່ງນີ້ໃນປະເທດອິສຣາເອນຈັກເທື່ອ." 34ແຕ່ພວກຟາຣີຊາຍ
ເວົ້າວ່າ, "ຄົນນີ້ຂັບໄລ່ຜີອອກໄດ້ດ້ວຍລິດຂອງນາຍຜີ."

## ຊົງສົງສານປະຊາຊົນ

35ພຣະເຢຊູໄດ້ສະເດັດໄປທົ່ວທຸກເມືອງທຸກບ້ານ ຊົງສັ່ງສອນໃນໂຮງທຳມະເທດສະໜາຂອງ
ເຂົາ ຊົງປະກາດຂ່າວປະເສີດເລື່ອງພຣະລາຊະອານາຈັກນັ້ນ ແລະຊົງໂຜດຄົນມີພະຍາດແລະ
ຄວາມເຈັບໄຂ້ທຸກຢ່າງໃຫ້ດີໝົດ. 36ແຕ່ເມື່ອພຣະອົງຊົງເຫັນປະຊາຊົນຫລວງຫລາຍກໍຊົງສົງ-
ສານເຂົາ ເພາະເຂົາຖືກຮົບກວນແລະອິດອ່ອນໂຮຍແຮງໄປເໝືອນຝູງແກະທີ່ບໍ່ມີຜູ້ລ້ຽງ. 37ແລ້ວ
ພຣະອົງຊົງກ່າວແກ່ພວກສິດຂອງພຣະອົງວ່າ, "ເຂົ້າທີ່ຈະກ່ຽວນັ້ນກໍຫລາຍແທ້ ແຕ່ຄົນງານມີ
ໜ້ອຍຢູ່. 38ເພາະສັນນັ້ນພວກທ່ານຈົ່ງອ້ອນວອນຜູ້ເປັນເຈົ້າຂອງນາ ໃຫ້ຈຳຄົນງານມາໃນການ
ກ່ຽວຂອງເພິ່ນເສຍ."

# ບົດທີ 10

## ຊົງເອີ້ນເອົາສາວົກສິບສອງຄົນ

*(ມຣກ 3:13-19; ລກ 6:12-16)*

1ເມື່ອພຣະອົງຊົງເອີ້ນສາວົກສິບສອງຄົນມາແລ້ວ ກໍຊົງປະທານໃຫ້ເຂົາມີອຳນາດເໜືອຜີຖ່ອຍ
ຮ້າຍ ເພື່ອຂັບໄລ່ມັນອອກໄດ້ ແລະເພື່ອໃຫ້ພະຍາດທັງຄວາມເຈັບໄຂ້ທຸກຢ່າງດີໄດ້. 2ພວກອັກ
ຄະສາວົກສິບສອງຄົນມີຊື່ດັ່ງນີ້: ຜູ້ທຳອິດຊື່ຊີໂມນທີ່ເອີ້ນວ່າເປໂຕ ກັບອັນເດອານ້ອງຊາຍຂອງ
ຕົນ, ຢາໂກໂບລູກເຊເບດາຍ ກັບໂຢຮັນນ້ອງຊາຍຂອງຕົນ. 3ຟີລິບ ແລະບາຣະໂທໂລມາຍ,
ໂທມາ ແລະມັດທາຍຜູ້ເກັບພາສີ. 4ຢາໂກໂບລູກອາລະຟາຍ ແລະທາດາຍ, ຊີໂມນພັກຊາດນິ-
ຍົມ ແລະຢູດາອິສະກາຣີອົດຜູ້ທີ່ທໍລະຍົດຕໍ່ພຣະອົງນັ້ນ.

## ຊົງໃຊ້ສາວົກສິບສອງຄົນໄປ

*(ມຣກ 6:7-13; ລກ 9:1-6)*

5ພວກສິບສອງຄົນນີ້ພຣະເຢຊູຊົງໃຊ້ໃຫ້ອອກໄປ ແລະຊົງສັ່ງເຂົາວ່າ, "ຢ່າໄດ້ເຂົ້າໄປໃນ
ທາງຂອງພວກຕ່າງຊາດ ແລະຢ່າເຂົ້າໄປໃນເມືອງໃດຂອງຊາວຊາມາເຣຍ. 6ແຕ່ຈົ່ງໄປຫາຝູງ
ແກະທີ່ເສຍແລ້ວ ຄືກະກູນອິສຣາເອນນັ້ນດີກວ່າ. 7ໃນຂະນະທີ່ພວກທ່ານໄປຈົ່ງປ່າວປະກາດ

ວ່າ 'ລາຊະອານາຈັກສະຫວັນມາໃກ້ແລ້ວ'. [8]ຄົນເຈັບໄຂ້ຈົ່ງເຮັດໃຫ້ດີ, ຄົນຕາຍແລ້ວຈົ່ງໃຫ້ເປັນ
ຄືນມາ, ຄົນຂີ້ທູດຈົ່ງໃຫ້ດີສະອາດ, ແລະຈົ່ງຂັບໄລ່ຜີຮ້າຍອອກເສຍ ທ່ານທັງຫລາຍໄດ້ຮັບ
ລ້າໆ ຈົ່ງໃຫ້ລ້າໆ. [9]ຢ່າເອົາເງິນ, ຫລືຄຳ, ຫລືທອງແດງໃສ່ໄວ້ໃນກະເປົາສາຍຮັດແອວຂອງ
ຕົນໄປ. [10]ຢ່າເອົາຖົງໄປໃຊ້ຕາມທາງ, ຫລືເສື້ອສອງໂຕ, ຫລືເກີບ, ຫລືໄມ້ເທົ້າ ເພາະວ່າຄົນ
ງານກໍສົມຄວນຈະໄດ້ຮັບອາຫານກິນ. [11]ເມື່ອພວກທ່ານເຂົ້າໄປໃນບ້ານໃດຫລືເມືອງໃດຈົ່ງຖາມ
ເບິ່ງວ່າ ຜູ້ໃດເປັນຜູ້ສົມຄວນ ແລ້ວໃຫ້ໄປອາໃສຢູ່ກັບຜູ້ນັ້ນຈົນກວ່າຈະອອກໄປ. [12]ຂະນະເມື່ອ
ຂຶ້ນເຮືອນຈົ່ງຄຳນັບໄທເຮືອນນັ້ນ. [13]ຖ້າຄົວເຮືອນນັ້ນສົມຄວນຮັບພອນກໍໃຫ້ຄວາມສະຫງົບສຸກ
ຂອງທ່ານຢູ່ກັບເຮືອນນັ້ນ ແຕ່ຖ້າຄົວເຮືອນນັ້ນສົມຄວນຮັບພອນກໍໃຫ້ຄວາມສະຫງົບສຸກນັ້ນກັບ
ຄືນມາສູ່ທ່ານອີກ. [14]ຖ້າຜູ້ໃດບໍ່ຕ້ອນຮັບພວກທ່ານຫລືບໍ່ຟັງຄຳຂອງທ່ານ ຈົ່ງອອກຈາກເຮືອນ
ນັ້ນຫລືເມືອງນັ້ນ ແລະຈົ່ງສັ່ນຂີ້ຝຸ່ນທີ່ຕິດຕີນຂອງທ່ານອອກເສຍ. [15]ເຮົາບອກພວກທ່ານຕາມ
ຄວາມຈິງວ່າ ໃນວັນພິພາກສາໂທດຂອງ ເມືອງ ໂຊໂດມ ແລະ ເມືອງ ໂກໂມຣາ ອາດຈະທົນງ່າຍ
ກວ່າໂທດຂອງເມືອງນັ້ນ.

## ເລື່ອງການຕໍ່ສູ້ທີ່ຕ້ອງເກີດຂຶ້ນ

*(ມຣກ 13:9 13; ລກ 21:12-17)*

[16]"ດັ່ງນີ້ ເຮົາ ໃຊ້ ພວກ ທ່ານ ໄປ ເໝືອນ ດັ່ງ ແກະ ຢູ່ ຖ້າມກາງ ຝູງ ໝາໄນ ສັນນັ້ນ ຈົ່ງ ສະຫລາດ
ເໝືອນງູແລະອ່ອນສຸພາບເໝືອນນົກເຂົາ. [17]ແຕ່ຈົ່ງລະວັງຄົນທັງຫລາຍ ເພາະເຂົາຈະມອບທ່ານ
ກັບສານສູງ ແລະຈະຂ້ຽນທ່ານໃນໂຮງທຳມະເທດສະໜາຂອງເຂົາ. [18]ເຂົາຈະພາພວກທ່ານໄປ
ຫາເຈົ້າເມືອງແລະກະສັດເພາະເຫັນແກ່ເຮົາ ເພື່ອໃຫ້ເປັນພະຍານແກ່ເຂົາແລະແກ່ຄົນຕ່າງຊາດ
ເໝືອນກັນ. [19]ແຕ່ເມື່ອເຂົາຈະມອບທ່ານໄວ້ນັ້ນ ຢ່າຄຶດອຸກໃຈວ່າຈະເວົ້າຢ່າງໃດຫລືຈະກ່າວອັນ
ໃດເພາະວ່າຄຳທີ່ທ່ານຈະກ່າວນັ້ນ ພຣະເຈົ້າຈະຊົງປະທານໃຫ້ແກ່ທ່ານໃນໂມງນັ້ນ. [20]ເພາະບໍ່
ແມ່ນພວກທ່ານເອງຈະເປັນຜູ້ກ່າວ ແຕ່ແມ່ນ ພຣະວິນຍານ ແຫ່ງ ພຣະບິດາ ຂອງພວກທ່ານຊົງ
ເປັນຜູ້ກ່າວໃນທ່ານ.

[21]ອ້າຍກັບນ້ອງຕ່າງຄົນກໍຈະມອບກັນໄວ້ ພໍ່ຈະມອບລູກ ແລະລູກກໍຈະລຸກຂຶ້ນຕໍ່ສູ້ພໍ່ແມ່ໃຫ້
ເຖິງແກ່ຄວາມຕາຍ. [22]ຄົນທັງປວງຈະກຽດຊັງພວກທ່ານເພາະເຫັນແກ່ນາມຂອງເຮົາ ແຕ່ຜູ້ໃດທີ່
ທົນໄດ້ເຖິງທີ່ສຸດຜູ້ນັ້ນຈະໄດ້ລອດພົ້ນ. [23]ເມື່ອເຂົາຂົ່ມເຫງພວກທ່ານໃນເມືອງໜຶ່ງ ຈົ່ງໜີໄປຍັງ
ເມືອງອື່ນ ເພາະເຮົາບອກພວກທ່ານຕາມຄວາມຈິງວ່າ ກ່ອນທີ່ພວກທ່ານຈະໄປທົ່ວເມືອງຕ່າງໆ
ທັງໝົດໃນປະເທດອິສຣາເອນ ບຸດມະນຸດຈະມາແລ້ວ.

[24]"ສິດບໍ່ໃຫຍ່ກວ່າຄູ ແລະຂ້ອຍໃຊ້ບໍ່ໃຫຍ່ກວ່ານາຍຂອງຕົນ. [25]ຖ້າສິດຈະສະເໝີຄູ ແລະ
ຂ້ອຍໃຊ້ສະເໝີນາຍຂອງຕົນກໍພໍດີແລ້ວ ຖ້າເຂົາໄດ້ເອີ້ນເຈົ້າເຮືອນວ່າ ເບເອນເຊບຸບ ເຂົາກໍຈະ
ເອີ້ນໄທເຮືອນຫລາຍກວ່ານັ້ນອີກຫລາຍເທົ່າໃດໜໍ.

## ຜູ້ທີ່ເຮົາຄວນຢ້ານ

*(ລກ 12:2-7)*

[26]"ເຫດສັນນັ້ນຢ່າຊູ່ຢ້ານເຂົາ ເພາະວ່າບໍ່ມີສິ່ງໃດປົກບັງໄວ້ທີ່ຈະບໍ່ເປີດເຜີຍ ຫລືສິ່ງລັບທີ່ບໍ່

ປະກົດໃຫ້ຮູ້. 27ສິ່ງທີ່ເຮົາກ່າວແກ່ພວກທ່ານໃນທີ່ມືດ ພວກທ່ານຈົ່ງກ່າວໃນທີ່ແຈ້ງ ແລະສິ່ງທີ່
ພວກທ່ານໄດ້ຍິນຈາກສຽງຊິ່ມ ຈົ່ງປ່າວປະກາດເທິງຫລັງຄາເຮືອນ. 28ຢ່າຊູ່ຢ້ານຜູ້ທີ່ຂ້າໄດ້ແຕ່
ຮ່າງກາຍ ແຕ່ຈະຂ້າຈິດວິນຍານບໍ່ໄດ້ ແຕ່ຈົ່ງຢ້ານພຣະອົງຜູ້ຊົງລິດທີ່ອາດໃຫ້ທັງຈິດວິນຍານ
ແລະຮ່າງກາຍຈິບຫາຍໃນໝົ້ນະລົກ. 29ນົກຈອກສອງໂຕເຂົາຂາຍລາຄາອັດໜຶ່ງບໍ່ແມ່ນຫລື ແຕ່
ຖ້າພຣະບິດາຂອງທ່ານບໍ່ຊົງເຫັນຊອບ ນົກນັ້ນແມ່ນແຕ່ໂຕດຽວຈະຕົກລົງດິນກໍບໍ່ໄດ້. 30ເຖິງຜົມ
ຂອງທ່ານກໍຊົງນັບໄວ້ແລ້ວໝົດທຸກເສັ້ນ. 31ເຫດສັນນັ້ນຢ່າຊູ່ຢ້ານ ຝ່າຍພວກທ່ານກໍປະເສີດ
ກວ່ານົກຈອກຫລາຍໂຕ.

## ການຮັບພຣະຄຣິດຕໍ່ໜ້າມະນຸດ

*(ລກ 12:8-9)*

32“ດັ່ງນັ້ນທຸກຄົນທີ່ຈະຮັບເຮົາຕໍ່ໜ້າມະນຸດ ຝ່າຍເຮົາຈະຮັບຜູ້ນັ້ນຕໍ່ພຣະພັກພຣະບິດາຂອງ
ເຮົາ ຜູ້ຊົງສະຖິດຢູ່ໃນສະຫວັນເໝືອນກັນ. 33ແຕ່ຜູ້ທີ່ປະຕິເສດເຮົາຕໍ່ໜ້າມະນຸດ ຝ່າຍເຮົາກໍຈະ
ປະຕິເສດຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນເໝືອນກັນ.

## ບໍ່ແມ່ນຊົງນຳຄວາມສະຫງົບສຸກແຕ່ໃຊ້ດາບ

*(ລກ 12:51-53; 14:26-27)*

34“ຢ່າຄຶດວ່າເຮົາມາເພື່ອຈະນຳຄວາມສະຫງົບສຸກມາສູ່ໂລກ ເຮົາບໍ່ໄດ້ມາເພື່ອນຳຄວາມສະ-
ຫງົບສຸກມາໃຫ້ ແຕ່ເຮົາມາເພື່ອຈະໃຫ້ມີດາບ. 35ເພາະເຮົາມາເພື່ອເຮັດໃຫ້ລູກຊາຍບໍ່ຖືກກັນກັບ
ພໍ່, ລູກຍິງບໍ່ຖືກກັນກັບແມ່, ແລະລູກໃພ້ບໍ່ຖືກກັບແມ່ຍ່າຂອງຕົນ. 36ແລະຜູ້ທີ່ຢູ່ຮ່ວມເຮືອນດຽວ
ກັນກໍຈະເປັນສັດຕູຕໍ່ກັນ.

37ຜູ້ໃດທີ່ຮັກພໍ່ແມ່ຫລາຍກວ່າເຮົາ ຜູ້ນັ້ນກໍບໍ່ສົມກັບເຮົາ. 38ແລະຜູ້ໃດທີ່ບໍ່ຮັບເອົາໄມ້ກາງແຂນ
ຂອງຕົນຕິດຕາມເຮົາມາ ຜູ້ນັ້ນກໍບໍ່ສົມກັບເຮົາ. 39ຜູ້ທີ່ຈະເອົາຊີວິດຂອງຕົນໄວ້ກໍຕ້ອງເສຍຊີວິດ
ນັ້ນ ແຕ່ຜູ້ທີ່ຍອມເສຍຊີວິດຂອງຕົນເພາະເຫັນແກ່ເຮົາ ກໍຈະໄດ້ພົບຊີວິດ.

## ເລື່ອງຄ່າບຳເໜັດ

*(ມຣກ 9:41)*

40“ຜູ້ທີ່ຮັບຕ້ອນພວກທ່ານກໍຮັບຕ້ອນເຮົາ ຜູ້ທີ່ຮັບຕ້ອນເຮົາກໍຮັບຕ້ອນພຣະອົງຜູ້ຊົງໃຊ້ເຮົາມາ.
41ຜູ້ທີ່ຮັບຕ້ອນຜູ້ປະກາດພຣະທຳເພາະເປັນຜູ້ປະກາດພຣະທຳກໍຈະໄດ້ບຳເໜັດເໝືອນຜູ້ປະກາດ
ພຣະທຳ ແລະຜູ້ທີ່ຮັບຕ້ອນຄົນສິນທຳເພາະເປັນຄົນສິນທຳ ກໍຈະໄດ້ບຳເໜັດເໝືອນຄົນສິນທຳ.
42ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດຈະເອົານ້ຳເປັນແຕ່ຈອກດຽວ ໃຫ້ແກ່ຄົນ
ເລັກນ້ອຍຜູ້ໜຶ່ງໃນຈຳພວກນີ້ດື່ມເພາະເປັນສິດ ຜູ້ນັ້ນຈະບໍ່ຂາດບຳເໜັດຂອງຕົນຈັກເທື່ອ.”

# ບົດທີ 11

## ລູກສິດຂອງໂຢຮັນມາໄຫວ້ພຣະເຢຊູ

*(ລກ 7:18-35)*

1ເມື່ອພຣະເຢຊູຊົງສັ່ງພວກສາວົກສິບສອງຄົນຂອງຕົນແລ້ວ ພຣະອົງໄດ້ສະເດັດຈາກທີ່ນັ້ນ

ໄປສັ່ງສອນແລະປ່າວປະກາດໃນເມືອງທັງຫລາຍຂອງເຂົາ.
2ຝ່າຍໂຢຮັນ, ເມື່ອຢູ່ໃນຄຸກ ໄດ້ຍິນຂ່າວກິດຈະການຂອງພຣະຄຣິດ ກໍໄດ້ໃຊ້ສິດໄປທູນ
ຖາມພຣະອົງວ່າ. 3“ທ່ານເປັນຜູ້ທີ່ຈະມານັ້ນຫລື ຫລືຈະຕ້ອງຄອງຖ້າຜູ້ອື່ນ?” 4ຝ່າຍພຣະເຢຊູ
ຊົງຕອບເຂົາວ່າ, “ຈົ່ງໄປແຈ້ງແກ່ໂຢຮັນຕາມທີ່ທ່ານໄດ້ຍິນແລະໄດ້ເຫັນ. 5ຄືວ່າຄົນຕາບອດກໍ
ເຫັນຮຸ່ງ, ຄົນຂາເສັ້ງກໍຍ່າງເປັນປົກກະຕິ, ຄົນຂີ້ທູດກໍດີສະອາດ, ຄົນຫູໜວກກໍໄດ້ຍິນ, ຄົນ
ຕາຍແລ້ວກໍເປັນຄືນມາ ແລະຂ່າວປະເສີດກໍປະກາດແກ່ຄົນອະນາຖາ. 6ບຸກຄົນໃດບໍ່ສະດຸດສົງ-
ໄສເພາະເຮົາ ຜູ້ນັ້ນກໍເປັນສຸກ.”
7ຄັນສິດເຫລົ່ານັ້ນກຳລັງອອກໄປ ພຣະເຢຊູຊົງຕັ້ງຕົ້ນກ່າວກັບປະຊາຊົນເຖິງເລື່ອງໂຢຮັນ
ວ່າ, “ທ່ານທັງຫລາຍໄດ້ອອກໄປໃນປ່າເພື່ອເບິ່ງຫຍັງ ເພື່ອເບິ່ງຕົ້ນອໍ້ໄຫວໄປມາດ້ວຍລົມພັດ
ຫລື. 8ແຕ່ທ່ານທັງຫລາຍອອກໄປເບິ່ງຫຍັງ ໄປເບິ່ງຄົນນຸ່ງຫົ່ມເຄື່ອງລະອຽດອ່ອນນອນຫລື ເບິ່ງ
ແມ, ຄົນທີ່ນຸ່ງຫົ່ມເຄື່ອງລະອຽດອ່ອນນອນກໍຢູ່ໃນພະລາຊະວັງ. 9ແຕ່ພວກທ່ານອອກໄປເບິ່ງ
ຫຍັງ ໄປເບິ່ງຜູ້ປະກາດພຣະທຳຫລື ແມ່ນແລ້ວ, ເຮົາບອກທ່ານທັງຫລາຍວ່າ ທ່ານຜູ້ນັ້ນກໍໃຫຍ່
ກວ່າຜູ້ປະກາດພຣະທຳອີກ. 10ຄືໂຢຮັນຜູ້ນີ້ແຫລະ, ທີ່ພຣະຄຳພີຂຽນໄວ້ເຖິງເພິ່ນວ່າ,

‘ເບິ່ງແມ, ເຮົາໃຊ້ຜູ້ຮັບໃຊ້ຂອງເຮົາໄປກ່ອນໜ້າທ່ານ
ຜູ້ຮັບໃຊ້ນັ້ນຈະຈັດແຈງຫົນທາງໄວ້ກ່ອນໜ້າທ່ານ.

11ເຮົາບອກພວກທ່ານຕາມຄວາມຈິງວ່າ ໃນບັນດາຜູ້ທີ່ເກີດຈາກແມ່ຍິງ ບໍ່ມີຜູ້ໃດໃຫຍ່ກວ່າ
ໂຢຮັນບັບຕິສະໂຕ ແຕ່ຜູ້ນ້ອຍທີ່ສຸດໃນລາຊະອານາຈັກສະຫວັນກໍໃຫຍ່ກວ່າໂຢຮັນອີກ. 12ຕັ້ງ-
ແຕ່ຄາວໂຢຮັນບັບຕິສະໂຕເຖິງທຸກວັນນີ້ ລາຊະອານາຈັກສະຫວັນກໍເປັນທີ່ຍາດຊິງເອົາ ແລ້ວຜູ້
ທີ່ມີໃຈຮຸນແຮງກໍເປັນຜູ້ຍາດເອົາໄດ້. 13ເພາະວ່າບັນດາຜູ້ປະກາດພຣະທຳກັບພຣະບັນຍັດໄດ້
ທຳນວາຍມາຈົນເຖິງໂຢຮັນນີ້. 14ຖ້າພວກທ່ານພໍໃຈຮັບເອົາຄຳນີ້ ກໍແມ່ນໂຢຮັນນີ້ແຫລະ ເປັນ
ເອລີຢາທີ່ຈະມານັ້ນ. 15ຜູ້ໃດມີຫູ ຈົ່ງຟັງເອົາເທີນ.
16“ເຮົາຈະປຽບຄົນສະໄໝນີ້ຄືກັບອັນໃດ ປຽບເໝືອນກັບໝູ່ເດັກນ້ອຍນັ່ງຢູ່ກາງຕະຫລາດ
ຮ້ອງໃສ່ກັນວ່າ,

17 ‘ຕູໄດ້ເປົ່າປີ່ໃຫ້ສູ ແຕ່ສູບໍ່ໄດ້ຟ້ອນລຳ
ຕູໄດ້ຮ້ອງໄຫ້ຮ່ຳໄຮ ແຕ່ສູບໍ່ໄດ້ຕີອົກຕ້ອນຮັບ’.

18ເພາະວ່າໂຢຮັນໄດ້ມາບໍ່ກິນບໍ່ດື່ມ ແລ້ວເຂົາເວົ້າວ່າ ‘ມີຜີສິງຢູ່’.
19ຝ່າຍບຸດມະນຸດໄດ້ມາທັງກິນແລະດື່ມ ເຂົາກໍເວົ້າວ່າ ‘ເບິ່ງແມ, ນີ້ເປັນຄົນກິນເກີນສ່ວນ
ແລະມັກເມົາ ເປັນເພື່ອນຂອງຄົນເກັບພາສີແລະຄົນນອກສິນທຳ’ ແຕ່ສະຕິປັນຍາຂອງພຣະເຈົ້າ
ກໍປະກົດວ່າ ຖືກຕ້ອງແລ້ວດ້ວຍຜົນແຫ່ງສະຕິປັນຍານັ້ນ.”

## ຊົງຕິຕຽນເມືອງຕ່າງໆ

*(ລກ 10:13-15)*

20ແລ້ວພຣະອົງກໍຊົງຕັ້ງຕົ້ນຕິຕຽນເມືອງຕ່າງໆ ຄືບ່ອນທີ່ພຣະອົງໄດ້ຊົງກະທຳການອິດທິລິດ
ເປັນສ່ວນຫລາຍນັ້ນ ເພາະເຂົາບໍ່ໄດ້ຖິ້ມໃຈເກົ່າເອົາໃຈໃໝ່. 21“ວິບັດແກ່ເຈົ້າ, ເມືອງໂຂຣາຊິນ

ວິບັດແກ່ເຈົ້າ, ເມືອງເບັດຊາອີດາເອີຍ ເພາະຖ້າການອິດທິລິດທີ່ໄດ້ກະທຳໃນຖ້າມກາງພວກ
ເຈົ້ານັ້ນ ໄດ້ກະທຳໃນເມືອງຕີເຣ ແລະເມືອງຊີໂດນ ຄົນໃນເມືອງທັງສອງຄົງໄດ້ຖິ້ມໃຈເກົ່າ
ເອົາໃຈໃໝ່, ນຸ່ງຫົ່ມຜ້າຫຍາບນັ່ງເທິງຂີ້ເທົ່າແຕ່ດົນນານມາແລ້ວ. 22ແຕ່ເຮົາບອກພວກເຈົ້າວ່າ
ໃນວັນພິພາກສາ ໂທດຂອງເມືອງຕີເຣແລະເມືອງຊີໂດນກໍຈະທົນງ່າຍກວ່າໂທດຂອງພວກເຈົ້າ.
23ແລະຝ່າຍເຈົ້າ, ເມືອງກາເປນາອູມເອີຍ ເຈົ້າຈະຖືກຍົກຂຶ້ນພຽງຟ້າຫລື ແຕ່ເຈົ້າຈະຕ້ອງລົງໄປ
ເຖິງແດນມໍລະນາ ດ້ວຍວ່າການອິດທິລິດທີ່ໄດ້ກະທຳໃນຖ້າມກາງເຈົ້ານັ້ນ ຖ້າໄດ້ກະທຳໃນ
ເມືອງໂຊໂດມ ເມືອງນັ້ນຄົງໄດ້ຕັ້ງຢູ່ຈົນເຖິງທຸກວັນນີ້. 24ເພາະເຫດນີ້ເຮົາບອກເຈົ້າວ່າໃນວັນພິ-
ພາກສາ ໂທດຂອງເມືອງໂຊໂດມຈະທົນງ່າຍກວ່າໂທດຂອງເຈົ້າ."

## ຊົງເອີ້ນເອົາບັນດາຜູ້ເມື່ອຍແລະທົນການໜັກ

*(ລກ 10:21-22)*

25ໃນເວລານັ້ນພຣະເຢຊູໄດ້ກາບທູນວ່າ, "ຂ້າແດ່ພຣະບິດາຜູ້ເປັນເຈົ້າສະຫວັນແລະແຜ່ນ-
ດິນໂລກ ຂ້າພຣະອົງສັນລະເສີນພຣະອົງ ເພາະພຣະອົງຊົງປົກບັງສິ່ງເຫລົ່ານີ້ໄວ້ຈາກຜູ້ມີປັນຍາ
ແລະຜູ້ສະຫລາດ ແຕ່ໄດ້ຊົງສະແດງໃຫ້ເດັກນ້ອຍຮູ້. 26ຂ້າແດ່ພຣະບິດາ, ພຣະອົງຊົງເຫັນ
ຊອບດັ່ງນັ້ນ." 27"ພຣະບິດາຂອງເຮົາໄດ້ຊົງມອບສິ່ງສາລະພັດໃຫ້ແກ່ເຮົາ ແລະບໍ່ມີຜູ້ໃດຮູ້ຈັກ
ພຣະບຸດນອກຈາກພຣະບິດາ ແລະບໍ່ມີຜູ້ໃດຮູ້ຈັກພຣະບິດານອກຈາກພຣະບຸດ ກັບຜູ້ທີ່ພຣະ-
ບຸດປະສົງຈະສະແດງໃຫ້ຮູ້. 28"ບັນດາຜູ້ທີ່ເຮັດການໜັກໜ່ວງແລະແບກພາລະໜັກ ຈົ່ງມາຫາ
ເຮົາ ແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ. 29ຈົ່ງເອົາແອກຂອງເຮົາແບກໄວ້ແລ້ວ
ຮຽນຮູ້ຈາກເຮົາ ເພາະວ່າເຮົາເປັນຜູ້ໃຈອ່ອນສຸພາບແລະຖ່ອມລົງ ແລ້ວຈິດໃຈຂອງທ່ານຈະໄດ້
ພົບຄວາມເຊົາເມື່ອຍ. 30ດ້ວຍວ່າແອກຂອງເຮົາກໍພໍເໝາະແລະພາລະຂອງເຮົາກໍເບົາ."

# ບົດທີ 12

## ບັນຫາເລື່ອງວັນຊະບາໂຕ

*(ມຣກ 2:23-28; ລກ 6:1-5)*

1ໃນເວລານັ້ນພຣະເຢຊູໄດ້ສະເດັດຜ່ານທົ່ງນາໄປໃນວັນຊະບາໂຕ ສ່ວນພວກສິດຂອງພຣະ-
ອົງກໍຫິວເຂົ້າ ຈຶ່ງຕັ້ງຕົ້ນເດັດເອົາຮວງເຂົ້າມາເກັດກິນ. 2ເມື່ອພວກຟາຣີຊາຍເຫັນດັ່ງນັ້ນຈຶ່ງທູນ
ພຣະອົງວ່າ, "ເບິ່ງແມ, ພວກສິດຂອງທ່ານເຮັດຜິດຕໍ່ກົດຂອງວັນຊະບາໂຕ." 3ພຣະອົງຊົງກ່າວ
ແກ່ເຂົາວ່າ, "ພວກທ່ານຍັງບໍ່ໄດ້ອ່ານຫລື ຊຶ່ງດາວິດໄດ້ເຮັດເມື່ອທ່ານແລະພັກພວກອຶດຫິວນັ້ນ.
4ຄືດາວິດໄດ້ເຂົ້າໄປໃນທີ່ສະຖິດຂອງພຣະເຈົ້າ ຮັບປະທານເຂົ້າຈີ່ທີ່ຕັ້ງຖວາຍຕໍ່ພຣະພັກ ຊຶ່ງ
ທ່ານແລະພັກພວກບໍ່ມີສິດຈະຮັບປະທານ ຄວນແຕ່ປະໂລຫິດພວກດຽວ. 5ພວກທ່ານບໍ່ໄດ້ອ່ານ
ໃນພຣະບັນຍັດຫລືທີ່ວ່າ ທຸກວັນຊະບາໂຕພວກປະໂລຫິດເຄີຍລະເມີດຕໍ່ກົດວັນຊະບາໂຕ ແຕ່ບໍ່
ມີຄວາມຜິດ. 6ເຮົາບອກພວກທ່ານວ່າ ຢູ່ທີ່ນີ້ມີສິ່ງໜຶ່ງໃຫຍ່ກວ່າພຣະວິຫານອີກ. 7ຖ້າພວກທ່ານ
ໄດ້ເຂົ້າໃຈຄວາມໝາຍຂອງພຣະຄຳພີທີ່ວ່າ, 'ເຮົາປະສົງຄວາມເມດຕາບໍ່ປະສົງເຄື່ອງບູຊາ'.
8ທ່ານກໍຄົງຈະບໍ່ກ່າວໂທດໃສ່ຄົນທີ່ບໍ່ມີຄວາມຜິດ ເພາະວ່າບຸດມະນຸດເປັນເຈົ້າຂອງວັນຊະບາ-

ໂຕ."

## ຊົງໂຜດຄົນມືລີບ

*(ມຣກ 3:1-6; ລກ 6:6-11)*

9ແລ້ວພຣະອົງໄດ້ສະເດັດອອກຈາກທີ່ນັ້ນເຂົ້າໄປໃນໂຮງທຳມະເທດສະໜາຂອງເຂົາ. 10ເບິ່ງ
ແມ, ຢູ່ທີ່ນັ້ນມີຄົນມືລີບເບື້ອງໜຶ່ງ ເຂົາຈຶ່ງທູນພຣະອົງວ່າ, "ຄວນຫລືຈະເຮັດໃຫ້ດີພະຍາດໃນ
ວັນຊະບາໂຕ" ເພື່ອເຂົາຈະຟ້ອງພຣະອົງໄດ້. 11ພຣະອົງຊົງຕອບເຂົາວ່າ, "ມີຜູ້ໃດໃນພວກທ່ານ
ຖ້າມີແກະໂຕດຽວແລະແກະໂຕນັ້ນຕົກຂຸມໃນວັນຊະບາໂຕ ຜູ້ນັ້ນຈະບໍ່ດຶງມັນຂຶ້ນຫລື. 12ມະນຸດ
ຄົນໜຶ່ງປະເສີດກວ່າໂຕແກະຫລາຍເທົ່າໃດໜໍ ດ້ວຍເຫດນັ້ນຈຶ່ງອະນຸຍາດໃຫ້ເຮັດການດີໃນວັນ
ຊະບາໂຕ." 13ແລ້ວພຣະອົງຊົງບອກຄົນມືລີບວ່າ, "ເຈົ້າຈົ່ງຢຽດມືອອກ" ຄົນນັ້ນກໍຢຽດມືອອກ
ແລ້ວມືນັ້ນກໍດີປົກກະຕິເໝືອນມືອີກເບື້ອງໜຶ່ງ. 14ຝ່າຍພວກຟາຣີຊາຍຈຶ່ງອອກໄປປຶກສາກັນເຖິງ
ເລື່ອງພຣະອົງວ່າ ຈະເຮັດຢ່າງໃດຈຶ່ງຈະຂ້າພຣະອົງໄດ້.

## ຜູ້ຮັບໃຊ້ທີ່ຖືກຊົງເລືອກໄວ້

15ແຕ່ພຣະເຢຊູຊົງຊາບ ຈຶ່ງສະເດັດອອກໄປຈາກທີ່ນັ້ນ ແລະປະຊາຊົນຫລວງຫລາຍກໍຕິດ-
ຕາມພຣະອົງໄປ ພຣະອົງກໍຊົງໂຜດໃຫ້ເຂົາດີພະຍາດທຸກຄົນ. 16ແລ້ວພຣະອົງຊົງສັ່ງຫ້າມຢ່າງ
ເດັດຂາດບໍ່ໃຫ້ເປີດເຜີຍພຣະນາມຂອງພຣະອົງ. 17ທັງນີ້ເພື່ອຈະໃຫ້ສຳເລັດຕາມຄຳທີ່ເອຊາຢາຜູ້
ປະກາດພຣະທຳໄດ້ກ່າວໄວ້ວ່າ.

18 "ເບິ່ງແມ, ຜູ້ຮັບໃຊ້ຂອງເຮົາທີ່ເຮົາໄດ້ເລືອກໄວ້
ຜູ້ເປັນທີ່ຮັກແລະຊອບໃຈຂອງເຮົາ.
ເຮົາຈະເອົາວິນຍານຂອງເຮົາໃສ່ໄວ້ເທິງເພິ່ນ
ເພື່ອຈະປະກາດຄວາມຍຸດຕິທຳແກ່ບັນດາປະຊາຊາດ.
19 ເພິ່ນຈະບໍ່ກໍ່ການວິວາດຜິດຖຽງແລະບໍ່ຮ້ອງສຽງດັງ
ບໍ່ມີໃຜຈະໄດ້ຍິນສຳນຽງສຽງຂອງເພິ່ນຕາມຖະໜົນ.
20 ໄມ້ອໍ້ບອບແລ້ວເພິ່ນຈະບໍ່ຫັກ
ໃສ້ຕະກຽງເປັນຄວັນຈວນຈະມອດເພິ່ນຈະບໍ່ມອດ
ຈົນກວ່າເພິ່ນຈະໄດ້ນຳຄວາມຍຸດຕິທຳໃຫ້ມີໄຊຊະນະ.
21 ແລະບັນດາປະຊາຊາດຈະຝາກຄວາມຫວັງໄວ້ກັບນາມຂອງເພິ່ນ."

## ພຣະເຢຊູກັບເບເອນເຊບູບ

*(ມຣກ 3:19-30; ລກ 11:14-23; 12:10)*

22ເມື່ອນັ້ນເຂົາໄດ້ພາຄົນຜູ້ໜຶ່ງທີ່ມີຜີຮ້າຍເຂົ້າສິງຢູ່ ທັງຕາບອດແລະປາກກືກມາຫາພຣະອົງ
ພຣະອົງຊົງໃຫ້ດີປົກກະຕິ ຄົນນັ້ນຈຶ່ງປາກໄດ້ເຫັນໄດ້. 23ແລະປະຊາຊົນກໍອັດສະຈັນໃຈຖາມກັນ
ວ່າ, "ຄົນນີ້ເປັນບຸດກະສັດດາວິດບໍ່ແມ່ນຫລື?" 24ແຕ່ພວກຟາຣີຊາຍ ເມື່ອໄດ້ຍິນດັ່ງນັ້ນກໍເວົ້າ
ກັນວ່າ, "ຜູ້ນີ້ຂັບໄລ່ຜີອອກໄດ້ໂດຍໃຊ້ອຳນາດເບເອນເຊບູບຄືນາຍຜີນັ້ນ." 25ຝ່າຍພຣະເຢຊູ
ຊົງຊາບຄວາມຄຶດຂອງເຂົາຈຶ່ງຊົງກ່າວແກ່ເຂົາວ່າ, "ອານາຈັກໃດໆ ທີ່ແຕກຈາກກັນແລ້ວກໍຄົງ

ຈິບຫາຍ ເມືອງໃດຫລືເຮືອນໃດໆ ທີ່ແຕກຈາກກັນແລ້ວຈະຕັ້ງໝັ້ນຢູ່ບໍ່ໄດ້. 26ແລະຖ້າຊາຕານ
ຂັບໄລ່ຊາຕານອອກ ມັນກໍແຕກແຍກກັນໃນຕົນມັນເອງ ແລ້ວອານາຈັກຂອງມັນຈະຕັ້ງໝັ້ນໄດ້
ຢ່າງໃດ. 27ແລະຖ້າເຮົາຂັບໄລ່ຜີອອກດ້ວຍອຳນາດເບເອນເຊບູບ ພວກລູກຫລານຂອງທ່ານ
ທັງຫລາຍເຄີຍຂັບມັນອອກດ້ວຍອຳນາດຂອງຜູ້ໃດ ດ້ວຍເຫດນີ້ແຫລະ, ເຂົາຈະເປັນຜູ້ຕັດສິນ
ພວກທ່ານ. 28ແຕ່ຖ້າເຮົາຂັບໄລ່ຜີອອກດ້ວຍພຣະວິນຍານຂອງພຣະເຈົ້າ ດັ່ງນັ້ນລາຊະອານາ-
ຈັກຂອງພຣະເຈົ້າກໍມາເຖິງພວກທ່ານແລ້ວ. 29ຫລືໃຜຈະເຂົ້າໄປໃນເຮືອນຂອງຄົນແຂງແຮງ
ແລະຈະປຸ້ນເອົາຊັບຂອງເພິ່ນໄດ້ຢ່າງໃດ ເວັ້ນໄວ້ແຕ່ຈະມັດຄົນແຂງແຮງນັ້ນໄວ້ເສຍກ່ອນ ແລ້ວ
ຈຶ່ງຈະປຸ້ນເອົາຊັບໃນເຮືອນຂອງເພິ່ນໄດ້. 30ຜູ້ໃດບໍ່ຢູ່ຝ່າຍເຮົາກໍຕໍ່ສູ້ກັບເຮົາ ແລະຜູ້ໃດບໍ່ໂຮມ
ເຂົ້າກັບເຮົາກໍເປັນຜູ້ເຮັດໃຫ້ແຕກກະຈາຍໄປ. 31ດ້ວຍເຫດນີ້ເຮົາບອກພວກທ່ານວ່າຄວາມຜິດ
ບາບແລະຄວາມໝິ່ນປະໝາດທຸກຢ່າງຈະຊົງໂຜດອະໄພໃຫ້ມະນຸດໄດ້ ແຕ່ຄຳໝິ່ນປະໝາດ
ພຣະວິນຍານຈະຊົງໂຜດອະໄພໃຫ້ບໍ່ໄດ້. 32ຜູ້ໃດທີ່ເວົ້າຄຳຂັດຂວາງຕໍ່ບຸດມະນຸດ ກໍຈະຊົງໂຜດ
ໃຫ້ອະໄພແກ່ຜູ້ນັ້ນໄດ້ ແຕ່ຜູ້ໃດທີ່ເວົ້າຄຳຂັດຂວາງຕໍ່ພຣະວິນຍານບໍລິສຸດ ກໍຈະຊົງໂຜດອະໄພ
ໃຫ້ແກ່ຜູ້ນັ້ນບໍ່ໄດ້ ທັງໃນໂລກນີ້ແລະໃນໂລກໜ້າ.

## ຕົ້ນໄມ້ກັບຜົນຂອງມັນ

*(ລກ 6:43-45)*

33"ຕ້ອງມີຕົ້ນໄມ້ດີ ໝາກມັນຈຶ່ງດີ ຖ້າຕົ້ນໄມ້ບໍ່ດີ ໝາກມັນກໍບໍ່ດີ ເພາະວ່າຈະໄດ້ຮູ້ຈັກຕົ້ນໄມ້
ດ້ວຍໝາກຂອງມັນ. 34ໂອ ຊາດງູຮ້າຍເອີຍ, ພວກຜູ້ຊົ່ວແລ້ວຈະເວົ້າຄວາມດີໄດ້ຢ່າງໃດ ດ້ວຍ
ວ່າໃຈເຕັມລົ້ນດ້ວຍສິ່ງໃດ ປາກກໍເວົ້າຕາມສິ່ງນັ້ນ. 35ຄົນດີກໍເອົາຂອງດີອອກມາຈາກຄັງແຫ່ງ
ຄວາມດີຂອງຕົນ ຄົນຊົ່ວກໍເອົາຂອງຊົ່ວອອກມາຈາກຄັງແຫ່ງຄວາມຊົ່ວຂອງຕົນ. 36ເຮົາບອກ
ພວກທ່ານວ່າ ຖ້ອຍຄຳເປົ່າໆ ທຸກຄຳທີ່ມະນຸດເວົ້າ ເຂົາຈະຕ້ອງໃຫ້ການເພາະຄຳນັ້ນໃນວັນພິ-
ພາກສາ. 37ດ້ວຍເຫດວ່າທີ່ທ່ານຈະພົ້ນໂທດໄດ້ຫລືຈະຕ້ອງຖືກໂທດນັ້ນ ກໍເພາະດ້ວຍຖ້ອຍຄຳ
ຂອງຕົນ."

## ຄົນຊາດຊົ່ວຢາກເຫັນໝາຍສຳຄັນ

*(ມຣກ 8:12; ລກ 11:29-32)*

38ຄາວນັ້ນມີບາງຄົນໃນພວກນັກທຳແລະພວກຟາຣີຊາຍມາທູນພຣະອົງວ່າ, "ອາຈານເອີຍ,
ພວກຂ້ານ້ອຍຢາກເຫັນໝາຍສຳຄັນຈາກທ່ານ." 39ພຣະອົງຊົງຕອບເຂົາວ່າ, "ຄົນສະໄໝຊົ່ວ
ແລະຄຶດທໍລະຍົດຕໍ່ພຣະເຈົ້າສະແຫວງຫາໝາຍສຳຄັນ ແລະຈະບໍ່ຊົງໂຜດໝາຍສຳຄັນໃຫ້ແກ່
ເຂົາ ເວັ້ນໄວ້ແຕ່ໝາຍສຳຄັນເລື່ອງໂຢນາຜູ້ປະກາດພຣະທຳ. 40ດ້ວຍວ່າໂຢນາໄດ້ຢູ່ໃນທ້ອງປາ
ໃຫຍ່ສາມວັນສາມຄືນສັນໃດ ບຸດມະນຸດຈະຢູ່ໃນທ້ອງແຜ່ນດິນສາມວັນສາມຄືນສັນນັ້ນ. 41ໄທ
ເມືອງນີເນເວຈະຢືນຂຶ້ນໃນວັນພິພາກສາ ພ້ອມກັບຄົນສະໄໝນີ້ກ່າວໂທດໃສ່ເຂົາ ດ້ວຍວ່າໄທ
ເມືອງນີເນເວໄດ້ຖິ້ມໃຈເກົ່າເອົາໃຈໃໝ່ເພາະຄຳປະກາດຂອງໂຢນາ ແລະເບິ່ງແມ, ຊຶ່ງໃຫຍ່
ກວ່າໂຢນາກໍມີຢູ່ທີ່ນີ້. 42ນາງກະສັດຝ່າຍທິດໃຕ້ຈະລຸກຂຶ້ນໃນວັນພິພາກສາພ້ອມກັບຄົນສະໄໝ
ນີ້ກ່າວໂທດໃສ່ເຂົາ ເພາະພະນາງໄດ້ສະເດັດມາແຕ່ທີ່ສຸດໂລກເພື່ອຈະຊົງຟັງພຣະສະຕິປັນຍາ

ຂອງກະສັດໂຊໂລໂມນ ແລະເບິ່ງແມ, ຊຶ່ງໃຫຍ່ກວ່າກະສັດໂຊໂລໂມນກໍມີຢູ່ທີ່ນີ້.

## ຜີຮ້າຍກັບຄືນເຮືອນເກົ່າ

*(ລກ 11:24-26)*

[43]“ເມື່ອຜີຖ່ອຍຮ້າຍອອກມາຈາກຜູ້ໃດແລ້ວ ມັນກໍທ່ຽວໄປໃນບ່ອນກັນດານເພື່ອສະແຫວງຫາ
ບ່ອນເຊົາເມື່ອຍ ແຕ່ມັນບໍ່ພົບ. [44]ແລ້ວມັນເວົ້າວ່າ ‘ເຮົາຈະຕ່າວຄືນໄປຍັງເຮືອນຂອງເຮົາທີ່ເຮົາ
ໄດ້ອອກມານັ້ນ’ ແລະເມື່ອມັນມາເຖິງກໍເຫັນວ່າເຮືອນນັ້ນເປົ່າຫວ່າງກວາດດີແລະຕົກແຕ່ງໄວ້
ແລ້ວ. [45]ເມື່ອນັ້ນມັນຈຶ່ງໄປຮັບເອົາຜີອື່ນອີກເຈັດໂຕຮ້າຍກວ່າມັນເອງ ແລ້ວກໍເຂົ້າໄປອາໃສຢູ່ທີ່
ນັ້ນ ແລະສະພາບບັ້ນປາຍຂອງຄົນນັ້ນກໍຮ້າຍກວ່າບັ້ນຕົ້ນ ຄົນສະໄໝຊົ່ວນີ້ກໍຈະເປັນຢ່າງນັ້ນ
ແຫລະ.”

## ມານດາແລະພວກນ້ອງຂອງພຣະເຢຊູ

*(ມຣກ 3:31-35; ລກ 8:19-21)*

[46]ຂະນະທີ່ພຣະອົງກຳລັງຊົງກ່າວກັບປະຊາຊົນຢູ່ນັ້ນ ເບິ່ງແມ, ມານດາກັບພວກນ້ອງຊາຍ
ຂອງພຣະອົງກໍຢືນຢູ່ຂ້າງນອກ ຫາໂອກາດຈະເວົ້າກັບພຣະອົງ. [47]ມີຄົນໜຶ່ງທູນພຣະອົງວ່າ,
“ເບິ່ງແມ, ມານດາກັບພວກນ້ອງຊາຍຂອງທ່ານຢືນຢູ່ຂ້າງນອກ ຫາໂອກາດຈະເວົ້າກັບທ່ານ.”
[48]ແຕ່ພຣະອົງຊົງກ່າວກັບຜູ້ທີ່ມາທູນນັ້ນວ່າ “ໃຜເປັນມານດາແລະໃຜເປັນນ້ອງຊາຍຂອງເຮົາ.”
[49]ແລ້ວພຣະອົງຊົງຊີ້ໄປທາງພວກສິດຂອງຕົນ ແລະຊົງກ່າວວ່າ, “ນີ້ແຫລະ, ຄືມານດາແລະ
ນ້ອງຊາຍຂອງເຮົາ. [50]ດ້ວຍວ່າຜູ້ໃດຈະເຮັດຕາມນ້ຳພຣະໄທພຣະບິດາຂອງເຮົາຜູ້ຊົງສະຖິດໃນ
ສະຫວັນ ຜູ້ນັ້ນແຫລະ, ເປັນນ້ອງຊາຍ, ເປັນນ້ອງສາວ, ແລະເປັນມານດາຂອງເຮົາ.”

# ບົດທີ 13

## ຄຳອຸປະມາເລື່ອງຜູ້ຫວ່ານ

*(ມຣກ 4:1-9; ລກ 8:4-8)*

[1]ໃນວັນນັ້ນພຣະເຢຊູໄດ້ສະເດັດອອກຈາກເຮືອນໄປປະທັບຢູ່ແຄມຝັ່ງທະເລ. [2]ມີຄົນຫລວງ-
ຫລາຍພາກັນມາຫາພຣະອົງ ເພາະເຫດນັ້ນພຣະອົງຈຶ່ງສະເດັດເຂົ້າປະທັບຢູ່ໃນເຮືອ ແລະຝູງ
ຄົນເຫລົ່ານັ້ນກໍຢືນຢູ່ແຄມຝັ່ງ. [3]ແລ້ວພຣະອົງຊົງກ່າວກັບເຂົາຫລາຍປະການເປັນຄຳອຸປະມາວ່າ,
“ເບິ່ງແມ, ມີຄົນໜຶ່ງອອກໄປຫວ່ານພືດ. [4]ເມື່ອກຳລັງຫວ່ານຢູ່ນັ້ນລາງເມັດກໍຕົກຕາມທາງ ແລ້ວ
ນົກກໍມາກິນເສຍ. [5]ລາງເມັດກໍຕົກໃສ່ບ່ອນຫີນຫລາຍດິນໜ້ອຍ ຈຶ່ງງອກຂຶ້ນໂລດເພາະດິນບໍ່
ເລິກ. [6]ແຕ່ເມື່ອຕາເວັນອອກມາກໍແຫ້ມ ຈຶ່ງຫ່ຽວແຫ້ງໄປເພາະບໍ່ມີຮາກ. [7]ລາງເມັດກໍຕົກກາງພຸ່ມ
ໜາມ ໜາມກໍປົ່ງຂຶ້ນຫຸ້ມຮັດເສຍ. [8]ລາງເມັດກໍຕົກໃສ່ດິນດີແລ້ວກໍເກີດຜົນເມັດໜຶ່ງຮ້ອຍຕໍ່, ເມັດ
ໜຶ່ງຫົກສິບຕໍ່, ເມັດໜຶ່ງສາມສິບຕໍ່. [9]ຜູ້ໃດມີຫູ ຈົ່ງຟັງເອົາ.”

## ຈຸດມຸ່ງໝາຍຂອງຄຳອຸປະມາ

*(ມຣກ 4:10-12; ລກ 8:9-10)*

[10]ຝ່າຍພວກສາວົກຈຶ່ງມາທູນພຣະອົງວ່າ, “ເຫດສັນໃດທ່ານຈຶ່ງກ່າວກັບເຂົາເປັນຄຳອຸປະມາ.”

[11]ພຣະອົງຊົງຕອບເຂົາວ່າ, "ຂໍ້ຄວາມເລິກລັບເລື່ອງລາຊະອານາຈັກສະຫວັນຊົງໂຜດໃຫ້ທ່ານ
ທັງຫລາຍຮູ້ໄດ້ແຕ່ຄົນເຫລົ່ານັ້ນບໍ່ຊົງໂຜດໃຫ້ຮູ້. [12]ດ້ວຍວ່າຜູ້ໃດມີຢູ່ແລ້ວຈະຊົງເພີ່ມເຕີມໃຫ້ແກ່
ຜູ້ນັ້ນອີກ ແລະຜູ້ນັ້ນຈະມີບໍລິບູນ ແຕ່ຜູ້ທີ່ບໍ່ມີນັ້ນ ເຖິງແມ່ນສິ່ງທີ່ຕົນມີຢູ່ກໍຈະຊົງຍຶກເອົາໄປຈາກ
ຜູ້ນັ້ນເສຍ. [13]ດ້ວຍເຫດນີ້ແຫລະ, ເຮົາຈຶ່ງກ່າວແກ່ເຂົາເປັນຄຳອຸປະມາເພາະເມື່ອເຂົາເບິ່ງກໍບໍ່ໄດ້
ເຫັນ, ເມື່ອເຂົາຟັງກໍບໍ່ໄດ້ຍິນ, ແລະບໍ່ເຂົ້າໃຈ. [14]ຄຳທຳນວາຍຂອງເອຊາຢາກໍຖືກຕ້ອງກັບເຂົາ
ຄືຄຳທີ່ວ່າ,

'ເຈົ້າທັງຫລາຍຈະໄດ້ຍິນແທ້ ແຕ່ຈະບໍ່ເຂົ້າໃຈຈັກເທື່ອ
ຈະໄດ້ເຫັນແທ້ ແຕ່ຈະບໍ່ໄດ້ສັງເກດຈັກເທື່ອ.
15 ດ້ວຍວ່າໃຈຂອງພົນລະເມືອງນີ້ກໍປຶກໜາ,
ຫູກໍໜັກ, ຕາຂອງເຂົາກໍຫລັບເສຍ
ຢ້ານວ່າເຂົາຈະສັງເກດດ້ວຍຕາ
ແລະຈະໄດ້ຍິນດ້ວຍຫູແລະຈະຮູ້ດ້ວຍໃຈ
ແລ້ວຈະຕ່າວກັບມາ ແລະເຮົາຈະເຮັດໃຫ້ເຂົາດີ'.

[16]ແຕ່ຕາຂອງພວກທ່ານກໍເປັນສຸກເພາະໄດ້ເຫັນ ແລະຫູຂອງພວກທ່ານກໍເປັນສຸກເພາະໄດ້
ຍິນ. [17]ເຮົາບອກພວກທ່ານຕາມຄວາມຈິງວ່າ ຜູ້ປະກາດພຣະທຳແລະຜູ້ມີສິນທຳຫລາຍຄົນ ໄດ້
ປາດຖະໜາຢາກເຫັນຊຶ່ງພວກທ່ານເຫັນຢູ່ນີ້ ແຕ່ເຂົາບໍ່ໄດ້ເຫັນ ເຂົາປາດຖະໜາຢາກໄດ້ຍິນຊຶ່ງ
ພວກທ່ານໄດ້ຍິນ ແຕ່ບໍ່ໄດ້ຍິນ.

## ຊົງອະທິບາຍເລື່ອງຄຳອຸປະມາເລື່ອງຜູ້ຫວ່ານ

*(ມຣກ 4:13-20; ລກ 8:11-15)*

[18]"ເຫດສັນນັ້ນທ່ານທັງຫລາຍຈົ່ງຟັງຄຳອຸປະມາເລື່ອງຜູ້ຫວ່ານພືດນັ້ນ. [19]ເມື່ອຜູ້ໃດໄດ້ຍິນ
ພຣະທຳເລື່ອງລາຊະອານາຈັກນັ້ນ ແຕ່ບໍ່ເຂົ້າໃຈ ມານຮ້າຍມາຍາດເອົາເມັດທີ່ຫວ່ານໃນໃຈຄົນ
ນັ້ນໄປເສຍ ນັ້ນແຫລະ, ໄດ້ແກ່ເມັດທີ່ຫວ່ານລົງຕາມທາງ. [20]ແລະເມັດທີ່ຫວ່ານຕົກໃນບ່ອນມີ
ຫີນຫລາຍນັ້ນ ໄດ້ແກ່ບຸກຄົນທີ່ໄດ້ຍິນພຣະທຳ ແລ້ວກໍຮັບເອົາທັນທີດ້ວຍຄວາມຍິນດີ. [21]ແຕ່ບໍ່ມີ
ຮາກໃນຕົວເອງຈຶ່ງທົນຢູ່ຊົ່ວຄາວ ແລະເມື່ອເກີດຄວາມຍາກລຳບາກ ຫລືການຂົ່ມເຫງເພາະ
ພຣະທຳນັ້ນ ຕົນກໍທໍ້ຖອຍໃຈເສຍທັນທີ. [22]ແລະເມັດທີ່ຫວ່ານຕົກກາງພຸ່ມໜາມ ໄດ້ແກ່ບຸກຄົນທີ່
ໄດ້ຍິນພຣະທຳ ແລ້ວຄວາມກັງວົນຕາມທຳມະດາໂລກ ແລະຄວາມຫລອກລວງແຫ່ງຊັບສິນບັດ
ກໍຫຸ້ມຮັດພຣະທຳນັ້ນເສຍຈຶ່ງບໍ່ເກີດຜົນ. [23]ສ່ວນເມັດທີ່ຫວ່ານຕົກລົງໃນດິນດີນັ້ນ ໄດ້ແກ່ຜູ້ທີ່ໄດ້
ຍິນພຣະທຳແລະເຂົ້າໃຈ ຜູ້ນັ້ນກໍເກີດຜົນໄດ້ຮ້ອຍຕໍ່ແດ່, ຫົກສິບຕໍ່ແດ່, ແລະສາມສິບຕໍ່ແດ່."

## ຄຳອຸປະມາເລື່ອງເຂົ້ານົກປົນເຂົ້າດີ

[24]ພຣະອົງຊົງກ່າວຄຳອຸປະມາອີກເລື່ອງໜຶ່ງໃຫ້ເຂົາທັງຫລາຍຟັງວ່າ, "ລາຊະອານາຈັກສະ-
ຫວັນປຽບເໝືອນຄົນຜູ້ໜຶ່ງທີ່ຫວ່ານພືດເມັດດີໃນນາຂອງຕົນ. [25]ແຕ່ເມື່ອຄົນທັງຫລາຍກຳລັງ
ນອນຫລັບຢູ່ ສັດຕູຂອງຜູ້ນັ້ນມາຫວ່ານເຂົ້ານົກໃສ່ຖ້າມກາງເຂົ້າດີ ແລ້ວກໍໜີເສຍ. [26]ຄັນເຂົ້າດີ
ນັ້ນງອກຂຶ້ນເປັນຮວງແລ້ວ ເຂົ້ານົກກໍປະກົດຂຶ້ນເໝືອນກັນ. [27]ພວກຂ້ອຍໃຊ້ຂອງເຈົ້າເຮືອນມາ

ແຈ້ງຄວາມແກ່ນາຍວ່າ, ‘ນາຍເອີຍ, ທ່ານໄດ້ຫວ່ານເຂົ້າດີໃນນາຂອງທ່ານບໍ່ແມ່ນຫລື ແລ້ວ
ເຂົ້ານົກມາແຕ່ໃສ.’ 28ຝ່າຍນາຍກໍຕອບວ່າ ‘ນີ້ແມ່ນການເຮັດຂອງສັດຕູ’ ພວກຂ້ອຍໃຊ້ຈຶ່ງຖາມ
ນາຍວ່າ ‘ຖ້າຢ່າງນັ້ນນາຍຢາກໃຫ້ໝູ່ຂ້ານ້ອຍໄປເກັບເຂົ້ານົກນັ້ນຫລື?’. 29ນາຍຈຶ່ງຕອບວ່າ ‘ຢ່າ
ຊູ່ໄປ ເພາະເມື່ອພວກເຈົ້າຫລົກເຂົ້ານົກນັ້ນຢ້ານຈະຫລົກເຂົ້າດີດ້ວຍ. 30ປະໃຫ້ເຂົ້າທັງສອງໃຫຍ່
ຂຶ້ນດ້ວຍກັນຈົນເຖິງລະດູກ່ຽວ ແລະໃນເວລາກ່ຽວນັ້ນເຮົາຈະສັ່ງພວກກ່ຽວວ່າ, ຈົ່ງເກັບເຂົ້ານົກ
ກ່ອນ, ມັດເປັນຟ່ອນເຜົາໄຟເສຍ ສ່ວນເຂົ້າດີນັ້ນຈົ່ງໂຮມໄວ້ໃນເລົ້າຂອງເຮົາ’.”

## ຄຳອຸປະມາເລື່ອງເມັດຜັກກາດ

*(ມຣກ 4:30-32; ລກ 13:18-19)*

31ພຣະອົງຍັງຊົງກ່າວຄຳອຸປະມາອີກເລື່ອງໜຶ່ງໃຫ້ເຂົາຟັງວ່າ, “ລາຊະອານາຈັກສະຫວັນປຽບ
ເໝືອນແກ່ນຜັກກາດເມັດໜຶ່ງ ທີ່ຄົນຜູ້ໜຶ່ງເອົາໄປຫວ່ານໃນສວນຂອງຕົນ. 32ເມັດນັ້ນນ້ອຍກວ່າ
ເມັດທັງປວງ ແຕ່ເມື່ອງອກຂຶ້ນແລ້ວກໍໃຫຍ່ກວ່າຜັກອື່ນ[ກ] ແລະກາຍເປັນຕົ້ນໄມ້ຈົນກວ່ານົກປ່າ
ໄດ້ມາເຮັດຄອນອາໃສຢູ່ຕາມກິ່ງກ້ານມັນ.”

## ຄຳອຸປະມາເລື່ອງເຊື້ອແປ້ງ

*(ລກ 13:20-21)*

33ພຣະອົງຊົງກ່າວຄຳອຸປະມາອີກເລື່ອງໜຶ່ງໃຫ້ເຂົາຟັງວ່າ, “ລາຊະອານາຈັກສະຫວັນປຽບ
ເໝືອນເຊື້ອແປ້ງ ທີ່ຜູ້ຍິງຄົນໜຶ່ງເອົາປົນໃສ່ໃນແປ້ງສາມຜອງ ຈົນແປ້ງນັ້ນຟູຂຶ້ນທັງໝົດ.”

## ການທີ່ພຣະເຢຊູຊົງໃຊ້ຄຳອຸປະມາ

*(ມຣກ 4:33-34)*

34ຂໍ້ຄວາມເຫລົ່ານີ້ພຣະເຢຊູຊົງກ່າວແກ່ປວງຊົນເປັນຄຳອຸປະມາທັງໝົດ ແລະນອກຈາກຄຳ
ອຸປະມາພຣະອົງບໍ່ໄດ້ຊົງກ່າວກັບເຂົາຈັກປະການ. 35ທັງນີ້ເພື່ອຈະໃຫ້ສຳເລັດຕາມທີ່ຊົງກ່າວໄວ້
ດ້ວຍຜູ້ປະກາດພຣະທຳວ່າ,

“ເຮົາຈະອ້າປາກເປັນຄຳອຸປະມາ
  ເຮົາຈະບອກຂໍ້ຄວາມທີ່ປົກອຳໄວ້
ຕັ້ງແຕ່ແຮກສ້າງໂລກ.”

## ຊົງອະທິບາຍຄຳອຸປະມາເລື່ອງເຂົ້ານົກ

36ແລ້ວພຣະເຢຊູໄດ້ສະເດັດໄປຈາກຄົນເຫລົ່ານັ້ນເຂົ້າໄປໃນເຮືອນ ພວກສາວົກມາເຝົ້າ
ພຣະອົງທູນວ່າ, “ຂໍທ່ານໂຜດອະທິບາຍໃຫ້ພວກຂ້ານ້ອຍເຂົ້າໃຈຄຳອຸປະມາເລື່ອງເຂົ້ານົກໃນນາ
ນັ້ນແດ່.” 37ພຣະອົງຊົງຕອບເຂົາວ່າ, “ຜູ້ຫວ່ານເມັດດີນັ້ນຄືບຸດມະນຸດ. 38ແລະນານັ້ນຄືແຜ່ນ-
ດິນໂລກ ສ່ວນເມັດດີນັ້ນໄດ້ແກ່ພົນລະເມືອງແຫ່ງລາຊະອານາຈັກ ແຕ່ເຂົ້ານົກໄດ້ແກ່ພົນລະ-
ເມືອງຂອງມານຮ້າຍ. 39ສັດຕູຜູ້ຫວ່ານເຂົ້ານົກຄືພະຍາມານ ລະດູກ່ຽວໄດ້ແກ່ຄາວສຸດໂລກ
ແລະຜູ້ກ່ຽວນັ້ນຄືພວກເທວະດາ. 40ເຫດສັນນັ້ນເຂົາເກັບເຂົ້ານົກເຜົາໄຟເສຍຢ່າງໃດ ຄາວສຸດ
ໂລກກໍຈະເປັນຢ່າງນັ້ນ. 41ບຸດມະນຸດຈະໃຊ້ພວກເທວະດາຂອງເພິ່ນອອກໄປ ເຂົາຈະເກັບ

[ກ]ໃນປະເທດນັ້ນມີຕົ້ນຜັກກາດລາງແນວສູງເຖິງສາມສີ່ແມັດ.

ກວາດທຸກສິ່ງທີ່ເຮັດໃຫ້ຫລົງຜິດ ກັບບັນດາຜູ້ທີ່ເຮັດຊົ່ວອອກໄປຈາກລາຊະແຜ່ນດິນຂອງເພິ່ນ.
42ແລ້ວຈະເອົາໄປຖິ້ມໃສ່ເຕົາໄຟຮ້ອນກ້າ ທີ່ນັ້ນຈະມີການຮ້ອງໄຫ້ກັດແຂ້ວຄຽ້ວຟັນ. 43ຄາວນັ້ນ
ພວກສິນທຳຈະຮຸ່ງເຮືອງໃນລາຊະແຜ່ນດິນພຣະບິດາຂອງເຂົາ ເໝືອນດັ່ງດວງອາທິດ ຜູ້ໃດມີ
ຫູ ຈົ່ງຟັງເອົາ.

## ຄຳອຸປະມາເລື່ອງຊັບທີ່ເຊື່ອງໄວ້

44"ລາຊະອານາຈັກສະຫວັນປຽບເໝືອນຊັບທີ່ເຊື່ອງໄວ້ໃນທົ່ງນາ ຊຶ່ງມີຜູ້ໜຶ່ງໄດ້ພົບແລ້ວຈຶ່ງ
ເຊື່ອງໄວ້ອີກ ແລະເພາະຄວາມຍິນດີຈຶ່ງໄປຂາຍສິ່ງທັງປວງທີ່ຕົນມີຢູ່ແລ້ວໄປຊື້ນານັ້ນ.

## ຄຳອຸປະມາເລື່ອງໄຂ່ມຸກທີ່ມີຄ່າແພງ

45"ອີກປະການໜຶ່ງລາຊະອານາຈັກສະຫວັນປຽບເໝືອນພໍ່ຄ້າຜູ້ໜຶ່ງທີ່ຊອກຫາໄຂ່ມຸກຢ່າງດີ.
46ເມື່ອໄດ້ພົບໄຂ່ມຸກເມັດໜຶ່ງທີ່ມີຄ່າຫລາຍ ກໍໄປຂາຍທຸກສິ່ງທີ່ຕົນມີຢູ່ແລ້ວໄປຊື້ໄຂ່ມຸກນັ້ນ.

## ຄຳອຸປະມາເລື່ອງມອງ

47"ອີກປະການໜຶ່ງລາຊະອານາຈັກສະຫວັນປຽບເໝືອນມອງທີ່ຖິ້ມລົງໃນທະເລ ຮ່ອມເອົາປາ
ທຸກຊະນິດ. 48ເມື່ອເຕັມແລ້ວກໍດຶງຂຶ້ນເທິງຝັ່ງ ນັ່ງລົງເລືອກເອົາໂຕດີໃສ່ໃນກະຕ່າ ສ່ວນໂຕບໍ່ດີ
ນັ້ນກໍຖິ້ມເສຍ. 49ໃນຄາວສຸດໂລກກໍຈະເປັນຢ່າງນັ້ນແຫລະ ພວກເທວະດາຈະອອກມາແຍກຄົນ
ຊົ່ວອອກຈາກຄົນສິນທຳ. 50ແລ້ວຈະເອົາໄປຖິ້ມໃສ່ເຕົາໄຟຮ້ອນກ້າ ທີ່ນັ້ນຈະມີການຮ້ອງໄຫ້ກັດ
ແຂ້ວຄຽ້ວຟັນ.

## ຄຳອຸປະມາເລື່ອງຂອງໃໝ່ແລະຂອງເກົ່າ

51"ຂໍ້ຄວາມເຫລົ່ານີ້ພວກທ່ານເຂົ້າໃຈແລ້ວຫລື" ເຂົາທູນຕອບວ່າ, "ໂດຍ, ເຂົ້າໃຈແລ້ວ."
52ຝ່າຍພຣະອົງຊົງກ່າວກັບເຂົາວ່າ, "ດ້ວຍເຫດນັ້ນນັກທຳທຸກຄົນທີ່ໄດ້ຮຽນຮູ້ເຖິງລາຊະອານາ-
ຈັກສະຫວັນ ກໍເໝືອນເຈົ້າເຮືອນທີ່ເອົາຂອງໃໝ່ທັງຂອງເກົ່າອອກມາຈາກສາງຂອງຕົນ."

## ໄທນາຊາເຮັດມີໃຈໜ່າຍພຣະອົງ

*(ມຣກ 6:1-6; ລກ 4:16:30)*

53ເມື່ອພຣະເຢຊູຊົງກ່າວຄຳອຸປະມາເຫລົ່ານີ້ສິ້ນສຸດລົງແລ້ວ ກໍສະເດັດໄປຈາກທີ່ນັ້ນ. 54ເມື່ອ
ສະເດັດມາເຖິງເມືອງເດີມຂອງພຣະອົງແລ້ວ ກໍຊົງສັ່ງສອນຄົນທັງຫລາຍໃນໂຮງທຳມະເທດ
ສະໜາຂອງເຂົາ ຈົນເຂົາງຶດປະຫລາດໃຈແລ້ວເວົ້າກັນວ່າ, "ຜູ້ນີ້ໄດ້ສະຕິປັນຍາແລະການອິດທິ-
ລິດຢ່າງນີ້ມາແຕ່ໃສ. 55ຄົນຜູ້ນີ້ເປັນລູກຊ່າງໄມ້ນັ້ນ ບໍ່ແມ່ນຫລື ແມ່ຂອງລາວຊື່ມາຣີອາ ບໍ່ແມ່ນ
ຫລື ພວກນ້ອງຊາຍຂອງລາວຊື່ ຢາໂກໂບ, ໂຢເຊັບ, ຊີໂມນ, ແລະຢູດາ ບໍ່ແມ່ນຫລື. 56ແລະ
ພວກນ້ອງສາວຂອງລາວກໍຢູ່ກັບໝູ່ເຮົາບໍ່ແມ່ນຫລື ລາວຈຶ່ງໄດ້ສິ່ງທັງປວງເຫລົ່ານີ້ມາແຕ່ໃສ."
57ເຂົາຈຶ່ງມີໃຈໜ່າຍແໜງພຣະອົງ ແຕ່ພຣະເຢຊູຊົງກ່າວກັບເຂົາວ່າ, "ຜູ້ປະກາດພຣະທຳຈະບໍ່
ຂາດຄວາມນັບຖື ເວັ້ນໄວ້ແຕ່ໃນເມືອງເດີມແລະໃນຄົວເຮືອນຂອງຕົນ." 58ໃນທີ່ນັ້ນພຣະອົງບໍ່
ໄດ້ຊົງກະທຳການອິດທິລິດຫລາຍເພາະເຂົາບໍ່ມີຄວາມເຊື່ອ.

# ບົດທີ 14

## ຄວາມມໍລະນະພາບຂອງໂຢຮັນບັບຕິສະໂຕ

*(ມຣກ 6:14-29; ລກ 9:7-9)*

[1]ໃນເວລານັ້ນ ເຮໂຣດຜູ້ປົກຄອງໄດ້ຍິນກິຕິສັບຂອງ ພຣະເຢຊູ. [2]ຈຶ່ງກ່າວແກ່ພວກຄົນໃຊ້ວ່າ,
"ຜູ້ນີ້ແຫລະ, ແມ່ນໂຢຮັນບັບຕິສະໂຕ ເພິ່ນໄດ້ເປັນຄືນມາຈາກຕາຍດ້ວຍເຫດນີ້ ລິດອຳນາດນີ້
ຈຶ່ງສະແດງອອກມາໃນຕົວເພິ່ນ." [3]ດ້ວຍວ່າ ເຮໂຣດ ໄດ້ຈັບ ໂຢຮັນ ຜູກມັດແລະຂັງຄຸກໄວ້ ເພາະ
ເຫັນແກ່ນາງ ເຮໂຣເດຍ ພັນລະຍາຂອງ ຟີລິບ ນ້ອງຊາຍຂອງຕົນ. [4]ເພາະ ໂຢຮັນ ເຄີຍທູນຕໍ່ເຮ
ໂລດວ່າ, "ທີ່ທ່ານຈະເອົານາງນັ້ນມາເປັນພັນລະຍາກໍຜິດຕໍ່ກົດແລ້ວ." [5]ເຖິງແມ່ນ ເຮໂຣດ ມີໃຈ
ຢາກຂ້າ ໂຢຮັນ ແຕ່ກໍຢ້ານປະຊາຊົນ ເພາະເຂົາຖືວ່າ ໂຢຮັນ ເປັນຜູ້ປະກາດພຣະທຳ. [6]ແຕ່ເມື່ອ
ວັນສະຫລອງວັນກຳເນີດຂອງ ເຮໂຣດ ມາເຖິງ ບຸດຍິງຂອງນາງ ເຮໂຣເດຍ ໄດ້ຟ້ອນລຳຖ້າມກາງ
ບັນດາ ແຂກ ເຮັດ ໃຫ້ ເຮໂຣດ ຊອບ ໃຈ. [7]ເຫດ ສັນນັ້ນ ເຮໂຣດ ຈຶ່ງ ສັນຍາ ດ້ວຍ ສາບານ ຕົນ ວ່າ,
"ນາງຈະຂໍສິ່ງໃດກໍຈະໃຫ້ສິ່ງນັ້ນ". [8]ຍິງສາວຈຶ່ງທູນຕາມທີ່ມານດາແນະນຳໄວ້ວ່າ, "ຂໍຫົວ ໂຢຮັນ
ບັບຕິສະໂຕ ໃສ່ຖາດມາໃຫ້ຂ້ານ້ອຍທີ່ນີ້." [9]ຝ່າຍ ເຮໂຣດຜູ້ປົກຄອງກໍທຸກໃຈ ແຕ່ເພາະເຫດທີ່ໄດ້
ສາບານຕົນ ແລະເພາະເຫັນແກ່ຄົນທັງປວງທີ່ນັ່ງຮ່ວມຮັບປະທານຢູ່ນັ້ນ ຈຶ່ງອອກຄຳສັ່ງອະນຸ-
ຍາດໃຫ້. [10]ແລ້ວກໍໃຊ້ຄົນໄປຕັດເອົາຫົວ ໂຢຮັນ ໃນຄຸກ. [11]ເຂົາຈຶ່ງເອົາຫົວໃສ່ຖາດມາໃຫ້ຍິງສາວ
ນັ້ນ ແລະນາງກໍໄປສົ່ງໃຫ້ມານດາຂອງຕົນ. [12]ຝ່າຍພວກສິດຂອງ ໂຢຮັນ ກໍພາກັນມາຮັບເອົາສົບ
ໄປສົ່ງສະການແລ້ວກໍມາທູນ ພຣະເຢຊູ ໃຫ້ຊົງຊາບ.

## ການຊົງລ້ຽງຫ້າພັນຄົນ

*(ມຣກ 6:30-44; ລກ 9:10-17; ຢຣ 6:1-14)*

[13]ເມື່ອ ພຣະເຢຊູ ໄດ້ຊົງຊາບແລ້ວ ຈຶ່ງລົງເຮືອສະເດັດຈາກບ່ອນນັ້ນໄປຍັງປ່າສະຫງັດຢູ່ຕ່າງ-
ຫາກ ເມື່ອປະຊາຊົນທັງປວງໄດ້ຍິນຂ່າວນັ້ນ ເຂົາກໍອອກຈາກເມືອງຕ່າງໆ ຍ່າງຕິດຕາມພຣະ-
ອົງໄປ. [14]ເມື່ອ ພຣະເຢຊູ ສະເດັດອອກຈາກເຮືອແລ້ວກໍຊົງເຫັນປະຊາຊົນໝູ່ໃຫຍ່ ພຣະອົງຊົງ
ສົງສານເຂົາ ຈຶ່ງຊົງໂຜດຄົນປ່ວຍທັງຫລາຍໃນພວກເຂົາໃຫ້ດີ. [15]ຄັນເວລາແລງມາພວກສາວົກ
ໄດ້ມາທູນພຣະອົງວ່າ, "ບ່ອນນີ້ເປັນປ່າແລະບັດນີ້ຄ່ຳແລ້ວ ສັນນັ້ນຂໍທ່ານຈົ່ງໃຫ້ປະຊາຊົນເລີກ
ໄປເສຍ ເພື່ອເຂົາຈະໄດ້ໄປຊື້ອາຫານຮັບປະທານຕາມບ້ານຕ່າງໆ." [16]ຝ່າຍ ພຣະເຢຊູ ຊົງຕອບ
ເຂົາວ່າ, "ເຂົາບໍ່ຈຳເປັນຕ້ອງໄປ ພວກທ່ານຈົ່ງລ້ຽງເຂົາສາ." [17]ພວກສາວົກຈຶ່ງທູນພຣະອົງວ່າ,
"ຢູ່ນີ້ພວກຂ້ານ້ອຍບໍ່ມີຫຍັງ ເວັ້ນແຕ່ເຂົ້າຈີ່ຫ້າກ້ອນແລະປາສອງໂຕເທົ່ານັ້ນ." [18]ພຣະອົງຊົງ
ບອກວ່າ, "ເອົາອັນນັ້ນມາໃຫ້ເຮົາທີ່ນີ້." [19]ແລ້ວພຣະອົງຊົງສັ່ງໃຫ້ປະຊາຊົນນັ່ງລົງຕາມປ່າຫຍ້າ
ເມື່ອຊົງຮັບເອົາເຂົ້າຈີ່ຫ້າກ້ອນ ແລະປາສອງໂຕນັ້ນແລ້ວກໍຊົງເງີຍພຣະພັກເບິ່ງຟ້າຂໍພຣະພອນ
ເມື່ອຊົງຫັກເຂົ້າຈີ່ແລ້ວກໍຍື່ນໃຫ້ພວກສາວົກ ພວກສາວົກກໍແຈກໃຫ້ຄົນທັງປວງ. [20]ເຂົາໄດ້ກິນ
ອີ່ມທຸກຄົນ ສ່ວນຕ່ອນຫັກທີ່ເຫລືອນັ້ນເຂົາເກັບໄດ້ເຕັມສິບສອງບຸງ. [21]ຝ່າຍຄົນທີ່ກິນນັ້ນມີຜູ້
ຊາຍປະມານຫ້າພັນຄົນ ບໍ່ນັບແມ່ຍິງແລະເດັກນ້ອຍ.

## ພຣະອົງຊົງດຳເນີນເທິງນ້ຳ

*(ມຣກ 6:15-52; ຢຮ 6:16-21)*

22ຫລັງຈາກນັ້ນພຣະອົງຊົງສັ່ງໃຫ້ພວກສາວົກລົງເຮືອຂ້າມຟາກໄປກ່ອນ ຂະນະທີ່ພຣະອົງຊົງ
ສັ່ງໃຫ້ປະຊາຊົນເລີກໄປ. 23ແລະເມື່ອຊົງໃຫ້ປະຊາຊົນເຫລົ່ານັ້ນເລີກໄປໝົດແລ້ວ ພຣະອົງຈຶ່ງ
ສະເດັດຂຶ້ນພູຢູ່ຕ່າງຫາກເພື່ອໄຫວ້ວອນ ແລະເມື່ອຄໍ່າມາແລ້ວພຣະອົງກໍຍັງຊົງຢູ່ທີ່ນັ້ນແຕ່ຕົນ
ດຽວ. 24ສ່ວນເຮືອນັ້ນກໍຢູ່ໄກຈາກຝັ່ງຫລາຍຮ້ອຍວາແລະຖືກຟອງນ້ຳຕີໄປມາເພາະທວນລົມຕ້ານ
ຢູ່. 25ຄັນເຖິງຍາມສີ່ກາງຄືນ[ກ] ພຣະອົງຊົງຍ່າງເທິງນ້ຳໄປຫາພວກສາວົກ. 26ແຕ່ເມື່ອພວກສາ-
ວົກໄດ້ເຫັນພຣະອົງຊົງຍ່າງມາເທິງນ້ຳ ເຂົາກໍຕົກໃຈເວົ້າກັນວ່າ, "ຜີ" ເຂົາຈຶ່ງຮ້ອງຂຶ້ນເພາະ
ຄວາມຢ້ານ ໃນທັນໃດນັ້ນພຣະເຢຊູໄດ້ຊົງອອກພຣະໂອດກ່າວກັບເຂົາວ່າ. 27"ຢ່ານ້ອຍໃຈ
ເທາະ ແມ່ນເຮົາເອງ ຢ່າຢ້ານ." 28ຝ່າຍເປໂຕຈຶ່ງທູນຕອບພຣະອົງວ່າ, "ນາຍເອີຍ, ຖ້າແມ່ນ
ທ່ານແນ່ແລ້ວ ຂໍສັ່ງໃຫ້ຂ້ານ້ອຍຍ່າງເທິງນ້ຳໄປຫາທ່ານ." 29ພຣະອົງຊົງບອກວ່າ, "ມາສາ" ເປ-
ໂຕຈຶ່ງອອກຈາກເຮືອຍ່າງເທິງນ້ຳໄປຫາພຣະເຢຊູ. 30ແຕ່ເມື່ອເຫັນລົມກໍຢ້ານແລະເມື່ອກຳລັງຈະ
ຈົມກໍຮ້ອງວ່າ, "ນາຍເອີຍ, ຊ່ອຍຂ້ານ້ອຍໃຫ້ພົ້ນແດ່ທ້ອນ." 31ໃນທັນໃດນັ້ນພຣະເຢຊູຊົງຢື້
ພຣະຫັດຈັບເປໂຕໄວ້ແລ້ວຊົງກ່າວວ່າ, "ໂອ ຜູ້ມີຄວາມເຊື່ອນ້ອຍ ເປັນຫຍັງ ຈຶ່ງສົງໄສ."
32ເມື່ອພຣະອົງກັບເປໂຕຂຶ້ນເຮືອແລ້ວລົມກໍງຽບລົງ. 33ພວກທີ່ຢູ່ໃນເຮືອໄດ້ມາກົ້ມຂາບໃສ່ພຣະ-
ອົງແລ້ວທູນວ່າ, "ທ່ານເປັນພຣະບຸດຂອງພຣະເຈົ້າຈິງແທ້."

## ຊົງໂຜດໄທເຄັນເນຊາເຣັດ

*(ມຣກ 6:53-56)*

34ເມື່ອຂ້າມຟາກໄປເຖິງແລ້ວກໍຈອດເຮືອທີ່ທ່າເມືອງເຄັນເນຊາເຣັດ. 35ເມື່ອຄົນໃນເຂດນັ້ນ
ໄດ້ຮູ້ຈັກພຣະອົງແລ້ວ ກໍໃຊ້ຄົນໄປບອກກ່າວທົ່ວຕະຫລອດເຂດນັ້ນ ເຂົາຈຶ່ງພາບັນດາຄົນເຈັບ
ປ່ວຍມາຫາພຣະອົງ. 36ທູນຂໍພຣະອົງຊົງໂຜດໃຫ້ຄົນເຈັບປ່ວຍພໍແຕ່ບາຍແຄມເຄື່ອງທົງຂອງ
ພຣະອົງເທົ່ານັ້ນ ແລະຜູ້ໃດໄດ້ບາຍແລ້ວກໍຖືກຊົງໂຜດໃຫ້ດີປົກກະຕິ.

# ບົດທີ 15

## ເລື່ອງຮີດຄອງທີ່ສືບມາແຕ່ບູຮານ

*(ມຣກ 7:1-16)*

1ເມື່ອນັ້ນພວກຟາຣິຊາຍແລະພວກນັກທຳອອກມາຈາກກຸງເຢຣູຊາເລັມ ຈຶ່ງທູນຖາມພຣະ-
ເຢຊູວ່າ. 2"ເປັນຫຍັງພວກສິດຂອງທ່ານຈຶ່ງລະເມີດຕໍ່ຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ
ນັ້ນ ດ້ວຍວ່າເຂົາບໍ່ລ້າງມືກ່ອນຮັບປະທານອາຫານ?". 3ພຣະອົງຊົງຕອບເຂົາວ່າ, "ເຫດສັນໃດ
ພວກທ່ານຈຶ່ງລະເມີດຕໍ່ຂໍ້ບັນຍັດຂອງພຣະເຈົ້າ ດ້ວຍເຫັນແກ່ຄຳສອນທີ່ຕົກທອດສືບຕໍ່ກັນມາ
ນັ້ນ. 4ເພາະພຣະເຈົ້າໄດ້ຊົງບັນຍັດໄວ້ວ່າ 'ຈົ່ງນັບຖືບິດາມານດາຂອງເຈົ້າ' ແລະ 'ຜູ້ໃດໝິ່ນ-
ປະໝາດບິດາມານດາ ຜູ້ນັ້ນຈະຕ້ອງມີໂທດເຖິງຕາຍ'. 5ແຕ່ຝ່າຍພວກທ່ານກັບເວົ້າວ່າ 'ຜູ້ໃດທີ່

[ກ]ລະຫວ່າງບ່າຍສາມທຸ່ມກັບຫົກທຸ່ມ.

ຈະເວົ້າກັບບິດາມານດາວ່າ, “ສິ່ງໃດຂອງຂ້ອຍທີ່ອາດຊ່ອຍເຫລືອເຈົ້າໄດ້ ສິ່ງນັ້ນກໍເປັນຂອງ
ຖວາຍໃຫ້ແລ້ວ.” [6]ຜູ້ນັ້ນຈຶ່ງບໍ່ຕ້ອງນັບຖືບິດາມານດາຂອງຕົນ’ ດັ່ງນັ້ນແຫລະ, ພວກທ່ານໄດ້ລົ-
ບລ້າງພຣະທຳ[ກ] ຂອງພຣະເຈົ້າ ເພາະເຫັນແກ່ຄຳສອນທີ່ຕົກທອດສືບຕໍ່ກັນມານັ້ນ. [7]ໂອ ຄົນ
ໜ້າຊື່ໃຈຄົດເອີຍ, ເອຊາຢາໄດ້ທຳນວາຍຄັກແນ່ເຖິງພວກທ່ານວ່າ.

[8] ‘ພົນລະເມືອງເຫລົ່ານີ້ໃຫ້ກຽດເຮົາແຕ່ປາກ
ສ່ວນໃຈຂອງເຂົາຫ່າງໄກຈາກເຮົາ.
[9] ເຂົານະມັດສະການເຮົາໂດຍອັບປະໂຫຍດ
ດ້ວຍເອົາບົດບັດຍັດຂອງມະນຸດ
ມາຕູ່ວ່າເປັນພຣະໂອວາດ’.”

## ສິ່ງທີ່ເຮັດໃຫ້ມະນຸດຊົ່ວມົວໝອງ

*(ມຣກ 7:14-23)*

[10]ແລ້ວພຣະອົງຊົງເອີ້ນເອົາປະຊາຊົນແລະຊົງກ່າວກັບເຂົາວ່າ, “ຈົ່ງຟັງແລະເຂົ້າໃຈສາ. [11]ບໍ່
ແມ່ນສິ່ງທີ່ເຂົ້າໄປໃນປາກນັ້ນ ທີ່ເຮັດໃຫ້ມະນຸດຊົ່ວມົວໝອງ ແຕ່ແມ່ນສິ່ງທີ່ອອກມາຈາກປາກ
ນັ້ນແຫລະ ທີ່ເຮັດໃຫ້ມະນຸດຊົ່ວມົວໝອງ.” [12]ຂະນະນັ້ນພວກສາວົກມາທູນຖາມພຣະອົງວ່າ,
“ທ່ານຊາບແລ້ວຫລືວ່າເມື່ອພວກຟາຣີຊາຍໄດ້ຍິນຄຳກ່າວນັ້ນ ເຂົາກໍເສຍໃຈ.” [13]ພຣະອົງຊົງ
ຕອບວ່າ, “ໄມ້ທຸກຕົ້ນທີ່ພຣະບິດາຂອງເຮົາ ຜູ້ຊົງສະຖິດຢູ່ໃນສະຫວັນ ບໍ່ໄດ້ຊົງປູກໄວ້ຈະຕ້ອງ
ຫລົກເສຍ. [14]ຊ່າງເຂົາເທາະ ເຂົາເປັນຄົນນຳທາງຕາບອດ ຖ້າຄົນຕາບອດຈູງຄົນຕາບອດໄປ
ເຂົາທັງສອງກໍຈະຕົກໃນຂຸມ.” [15]ຝ່າຍເປໂຕຈຶ່ງທູນພຣະອົງວ່າ, “ຂໍທ່ານໂຜດແກ້ໄຂຄຳອຸປະມາ
ນີ້ໃຫ້ພວກຂ້ານ້ອຍແດ່.” [16]ພຣະເຢຊູຊົງຕອບວ່າ, “ພວກທ່ານກໍຍັງຂາດຄວາມເຂົ້າໃຈເໝືອນ
ກັນຫລື. [17]ພວກທ່ານບໍ່ໄດ້ສັງເກດຫລືວ່າ ສິ່ງໃດທີ່ເຂົ້າໄປໃນປາກກໍລົງໃນທ້ອງແລ້ວກໍຖ່າຍ
ອອກມາ. [18]ແຕ່ສິ່ງທີ່ອອກຈາກປາກກໍອອກມາຈາກໃຈ ສິ່ງນັ້ນແຫລະ, ເຮັດໃຫ້ມະນຸດຊົ່ວມົວ
ໝອງ. [19]ເພາະວ່າຄວາມຄິດຊົ່ວຮ້າຍ, ການຂ້າຄົນ, ການຫລິ້ນຊູ້ຈາກຜົວເມຍ, ການຜິດຊາຍ
ຍິງ, ການລັກຊັບ, ການເປັນພະຍານບໍ່ຈິງ, ແລະການນິນທາ ກໍອອກມາຈາກໃຈ. [20]ສິ່ງເຫລົ່ານີ້
ແຫລະ, ທີ່ເຮັດໃຫ້ມະນຸດຊົ່ວມົວໝອງ ແຕ່ການຮັບປະທານອາຫານບໍ່ລ້າງມືກ່ອນນັ້ນ ບໍ່ໄດ້ເຮັດ
ໃຫ້ມະນຸດຊົ່ວມົວໝອງ.”

## ຄວາມເຊື່ອຂອງຍິງຊາດການາອານ

*(ມຣກ 7:24-30)*

[21]ແລ້ວພຣະເຢຊູໄດ້ສະເດັດຈາກບ່ອນນັ້ນເຂົ້າໄປໃນເຂດເມືອງຕີເຣແລະເມືອງຊີໂດນ. [22]ມີ
ຍິງຊາດການາອານຄົນໜຶ່ງມາຈາກເຂດນັ້ນຮ້ອງທູນພຣະອົງວ່າ, “ນາຍຜູ້ເປັນບຸດດາວິດເອີຍ,
ຂໍໂຜດເມດຕາຂ້ານ້ອຍແດ່ທ້ອນ ລູກສາວຂອງຂ້ານ້ອຍມີຄວາມລຳບາກຫລາຍຍ້ອນຜີຮ້າຍບັງ-
ຄັບ.” [23]ຝ່າຍພຣະອົງບໍ່ໄດ້ຊົງຕອບຍິງນັ້ນຈັກຄຳ ແລ້ວພວກສາວົກໄດ້ມາທູນພຣະອົງວ່າ, “ຂໍ
ບອກໃຫ້ມັນເມືອເສຍ ເພາະມັນຮ້ອງຕາມເຮົາມາ.” [24]ພຣະອົງຊົງຕອບວ່າ, “ເຮົາບໍ່ໄດ້ຮັບໃຊ້ມາ

[ກ]ຫລືວ່າ “ພຣະບັນຍັດ”

ຫາຜູ້ໃດ ເວັ້ນແຕ່ຝູງແກະທີ່ເສຍແລ້ວ ຄືກະກຸນອິສຣາເອນ.” 25ຝ່າຍຍິງນັ້ນໄດ້ມາຂາບທູນ
ພຣະອົງວ່າ, “ນາຍເອີຍ, ຂໍໂຜດຊ່ອຍຂ້ານ້ອຍແດ່ທ້ອນ.” 26ພຣະອົງຊົງຕອບວ່າ, “ບໍ່ສົມຄວນ
ຈະເອົາອາຫານຂອງລູກໂຍນໃຫ້ແກ່ໝານ້ອຍ.” 27ຍິງນັ້ນທູນຕອບວ່າ, “ຈິງຢູ່ຂ້ານ້ອຍ ແຕ່ເຖິງ
ແມ່ນໝານ້ອຍກໍເຄີຍກິນເມັດທີ່ຕົກຈາກໂຕະນາຍຂອງມັນ.” 28ແລ້ວພຣະເຢຊູຊົງຕອບຍິງນັ້ນ
ວ່າ, “ນາງເອີຍ, ຄວາມເຊື່ອຂອງເຈົ້າກໍໃຫຍ່ໃຫ້ເປັນໄປຕາມຄວາມປະສົງຂອງເຈົ້າເທີນ” ລູກ
ສາວຂອງຍິງນັ້ນກໍດີເປັນປົກກະຕິຕັ້ງແຕ່ໂມງນັ້ນ.

## ຊົງໂຜດຫລາຍຄົນໃຫ້ດີ

29ພຣະເຢຊູໄດ້ສະເດັດອອກຈາກທີ່ນັ້ນລຽບຝັ່ງທະເລຄາລີເລໄປ ແລ້ວສະເດັດຂຶ້ນພູຊົງປະ-
ທັບນັ່ງລົງທີ່ນັ້ນ. 30ແລະມີປະຊາຊົນຈຳນວນຫລາຍມາຫາພຣະອົງ ເຂົາພາຄົນຂາເສັ້ງ, ຄົນຕາ-
ບອດ, ຄົນແຂນຂາເສັ້ງ, ຄົນປາກກືກ, ແລະຄົນເຈັບອື່ນໆຫລາຍຄົນ ມາວາງໄວ້ແທບພຣະ-
ບາດຂອງພຣະເຢຊູ ແລ້ວພຣະອົງໄດ້ຊົງໂຜດໃຫ້ເຂົາດີ. 31ຈົນຝູງຄົນເຫລົ່ານັ້ນງຶດອັດສະຈັນ
ໃຈ ເມື່ອເຫັນຄົນປາກກືກປາກໄດ້, ຄົນແຂນຂາເສັ້ງດີປົກກະຕິ, ຄົນຂາເສັ້ງຍ່າງໄປໄດ້, ແລະ
ຄົນຕາບອດເຫັນໄດ້ ແລ້ວເຂົາຈຶ່ງສັນລະເສີນພຣະເຈົ້າຂອງຊາດອິສຣາເອນ.

## ຊົງລ້ຽງຄົນສີ່ພັນ

*(ມຣກ 8:1-10)*

32ຝ່າຍພຣະເຢຊູຊົງເອີ້ນພວກສາວົກຂອງຕົນມາ ແລ້ວຊົງກ່າວວ່າ, “ເຮົາສົງສານຄົນເຫລົ່ານີ້
ເພາະເຂົາຄ້າງຢູ່ກັບເຮົາໄດ້ສາມວັນແລ້ວ ແລະບໍ່ມີອາຫານກິນເຮົາບໍ່ຢາກໃຫ້ເຂົາກັບໄປໃນຂະ-
ນະທີ່ຍັງຫິວຢູ່ ເພາະຢ້ານວ່າເຂົາຈະເມື່ອຍອິດອ່ອນຕາມທາງ.” 33ພວກສາວົກທູນຖາມພຣະອົງ
ວ່າ, “ໃນປ່າຢ່າງນີ້ພວກຂ້ານ້ອຍຈະຊອກອາຫານທີ່ໃດພໍລ້ຽງຄົນເຫລົ່ານີ້ໃຫ້ອີ່ມໄດ້.” 34ພຣະ-
ເຢຊູຊົງຖາມເຂົາວ່າ, “ພວກທ່ານມີເຂົ້າຈີ່ຈັກກ້ອນ” ເຂົາທູນຕອບວ່າ, “ມີເຈັດກ້ອນກັບປານ້ອຍ
ສອງສາມໂຕ.” 35ພຣະອົງຈຶ່ງຊົງສັ່ງໃຫ້ປະຊາຊົນນັ່ງລົງຕາມດິນ. 36ແລ້ວຊົງຮັບເຂົ້າຈີ່ເຈັດກ້ອນ
ກັບປາເຫລົ່ານັ້ນມາໂມທະນາພຣະຄຸນ ຈຶ່ງຊົງຫັກຍື່ນໃຫ້ພວກສາວົກຂອງຕົນ ພວກສາວົກກໍໄດ້
ແຈກຢາຍໃຫ້ປະຊາຊົນ. 37ແລະຄົນທັງປວງໄດ້ກິນອີ່ມໝົດທຸກຄົນຕ່ອນຫັກທີ່ເຫລືອນັ້ນເຂົາເກັບ
ໄດ້ເຕັມເຈັດບຸງ. 38ສ່ວນຄົນທີ່ໄດ້ກິນນັ້ນມີຜູ້ຊາຍເຖິງສີ່ພັນຄົນ ບໍ່ນັບແມ່ຍິງກັບເດັກນ້ອຍ.
39ເມື່ອຊົງສັ່ງໃຫ້ເຂົາເລີກໄປແລ້ວ ພຣະອົງກໍສະເດັດລົງເຮືອໄປຍັງເຂດເມືອງມາຄາດານ.

# ບົດທີ 16

## ຂໍໃຫ້ຊົງສະແດງໝາຍສຳຄັນ

*(ມຣກ 8:11-13; ລກ 12:54-56)*

1ພວກຟາຣີຊາຍກັບພວກຊາດູກາຍໄດ້ມາທົດລອງພຣະອົງ ໂດຍຂໍໃຫ້ພຣະອົງຊົງສະແດງ
ໝາຍສຳຄັນຢ່າງໜຶ່ງຈາກສະຫວັນໃຫ້ເຂົາເຫັນ. 2ພຣະອົງຊົງຕອບເຂົາວ່າ, “[ເມື່ອຄ່ຳມາພວກ
ທ່ານເຄີຍເວົ້າວ່າ ‘ອາກາດຈະດີເພາະຟ້າສີແດງ’. 3ແລະເວລາເຊົ້າພວກທ່ານກໍເວົ້າວ່າ ‘ມື້ນີ້ຈະ
ເກີດພາຍຸເພາະຟ້າສີແດງ ແລະມືດມົວ’ ທ້ອງຟ້ານັ້ນພວກທ່ານຍັງສັງເກດຮູ້ ແຕ່ໝາຍສຳຄັນ

ແຫ່ງສະໄໝຕ່າງໆ ພວກທ່ານບໍ່ອາດສັງເກດໄດ້]. 4ຄົນສະໄໝຊົ່ວແລະຄຶດທໍລະຍົດຕໍ່ພຣະເຈົ້າ
ສະແຫວງຫາໝາຍສຳຄັນ ແຕ່ຈະບໍ່ຊົງໂຜດໝາຍສຳຄັນໃຫ້ແກ່ເຂົາ ເວັ້ນໄວ້ແຕ່ໝາຍສຳຄັນ
ເລື່ອງໂຢນາ” ແລ້ວພຣະອົງກໍສະເດັດຈາກເຂົາໄປ.

## ເຊື້ອແປ້ງຂອງພວກຟາຣີຊາຍແລະຊາດູກາຍ

*(ມຣກ 8:14-21)*

5ຝ່າຍພວກສາວົກເມື່ອຂ້າມໄປຟາກນັ້ນກໍໄດ້ລືມເອົາເຂົ້າຈີ່ໄປນຳ. 6ພຣະເຢຊູຊົງບອກເຂົາ
ວ່າ, “ຈົ່ງສັງເກດແລະລະວັງເຊື້ອແປ້ງຂອງພວກຟາຣີຊາຍ ແລະພວກຊາດູກາຍໃຫ້ດີ.” 7ພວກ
ສາວົກກໍເວົ້າກັນຢູ່ວ່າ, “ເຫັນຈະເປັນເພາະໝູ່ເຮົາບໍ່ໄດ້ເອົາເຂົ້າຈີ່ມານຳ.” 8ແຕ່ພຣະເຢຊູຊົງຊາບ
ຈຶ່ງຊົງກ່າວວ່າ, “ໂອ ຜູ້ມີຄວາມເຊື່ອນ້ອຍເຫດໃດພວກທ່ານຈຶ່ງເວົ້າກັນແລະກັນເຖິງເລື່ອງບໍ່ໄດ້
ເອົາເຂົ້າຈີ່ມານຳ. 9ພວກທ່ານຍັງບໍ່ທັນສັງເກດແລະຈື່ບໍ່ໄດ້ຫລື ເລື່ອງເຂົ້າຈີ່ຫ້າກ້ອນສຳລັບຄົນ
ຫ້າພັນນັ້ນ ພວກທ່ານເກັບໄດ້ຈັກບຸງ. 10ຫລືເລື່ອງເຂົ້າຈີ່ເຈັດກ້ອນສຳລັບຄົນສີ່ພັນນັ້ນ ພວກ
ທ່ານເກັບໄດ້ຈັກບຸງ. 11ເປັນສັນໃດພວກທ່ານຈຶ່ງບໍ່ສັງເກດຮູ້ວ່າ ເຮົາບໍ່ໄດ້ເວົ້າກັບພວກທ່ານດ້ວຍ
ເລື່ອງເຂົ້າຈີ່ ແຕ່ໃຫ້ລະວັງເຊື້ອແປ້ງຂອງພວກຟາຣີຊາຍ ແລະພວກຊາດູກາຍ.” 12ແລ້ວພວກ
ສາວົກກໍເຂົ້າໃຈວ່າ ພຣະອົງບໍ່ໄດ້ຊົງສັ່ງເຂົາໃຫ້ລະວັງເຊື້ອແປ້ງນັ້ນ ແຕ່ໃຫ້ລະວັງຄຳສອນຂອງ
ພວກຟາຣີຊາຍ ແລະພວກຊາດູກາຍ.

## ເປໂຕຍອມຮັບວ່າພຣະເຢຊູຊົງເປັນພຣະຄຣິດ

*(ມຣກ 8:27-30; ລກ 9:18-21)*

13ຄັນພຣະເຢຊູສະເດັດເຂົ້າໄປໃນເຂດເມືອງກາຍຊາເຣຍຟີລິບປອຍ ພຣະອົງຊົງຖາມພວກ
ສາວົກຂອງຕົນວ່າ, “ຄົນທັງຫລາຍເວົ້າກັນວ່າບຸດມະນຸດແມ່ນຜູ້ໃດ.” 14ເຂົາທູນຕອບວ່າ, “ຜູ້
ລາງຄົນວ່າເປັນໂຢຮັນບັບຕິສະໂຕ ແລະຄົນອື່ນວ່າເປັນເອລີຢາ ແຕ່ຄົນອື່ນອີກວ່າເປັນເຢເຣ-
ມີຢາ ຫລືເປັນຄົນໜຶ່ງໃນພວກຜູ້ປະກາດພຣະທຳ.” 15ພຣະອົງຊົງຖາມເຂົາວ່າ, “ແລ້ວຝ່າຍ
ພວກທ່ານເດ, ວ່າເຮົາເປັນໃຜ.” 16ຊີໂມນເປໂຕທູນຕອບວ່າ, “ທ່ານເປັນພຣະຄຣິດ, ພຣະບຸດ
ຂອງພຣະເຈົ້າຜູ້ຊົງພຣະຊົນຢູ່.” 17ພຣະເຢຊູຊົງກ່າວກັບເປໂຕວ່າ, “ຊີໂມນບາຣະໂຢນາເອີຍ,
ທ່ານກໍເປັນສຸກ ເພາະວ່າບໍ່ແມ່ນມະນຸດທີ່ໄດ້ສະແດງຄຳນີ້ແກ່ທ່ານ ແຕ່ແມ່ນພຣະບິດາຂອງເຮົາ
ຜູ້ຊົງສະຖິດໃນສະຫວັນຊົງໃຫ້ຊາບ. 18ຝ່າຍເຮົາ, ເຮົາບອກທ່ານວ່າທ່ານຄືເປໂຕ[ກ] ເທິງສີລາ
ກ້ອນນີ້ ເຮົາຈະສ້າງຄຣິສຕະຈັກຂອງເຮົາຂຶ້ນ ແລະປະຕູແຫ່ງແດນມໍລະນາຈະ ‘ມີໄຊຕໍ່ຄຣິສ-
ຕະຈັກນັ້ນບໍ່ໄດ້. 19ເຮົາຈະມອບຂໍກະແຈແຫ່ງແຜ່ນດິນສະຫວັນໄວ້ໃຫ້ທ່ານ ທ່ານຈະຜູກມັດສິ່ງ
ໃດໄວ້[ຂ] ໃນໂລກ, ສິ່ງນັ້ນກໍຈະຊົງຜູກມັດໄວ້ແລ້ວໃນສະຫວັນ ທ່ານຈະແກ້ສິ່ງໃດ[ຂ] ໃນໂລກ,
ສິ່ງນັ້ນກໍຈະຊົງແກ້ໃຫ້ຫລຸດແລ້ວໃນສະຫວັນ.” 20ແລ້ວພຣະອົງຊົງຫ້າມພວກສາວົກ ບໍ່ໃຫ້ບອກ
ຜູ້ໃດວ່າຕົນຊົງເປັນພຣະຄຣິດ.

---

[ກ]ແປວ່າກ້ອນຫີນ.

[ຂ]ໝາຍຄວາມວ່າ “ປະກາດວ່າເປັນສິ່ງຕ້ອງຫ້າມແລ້ວ.” [ຂ]ໝາຍຄວາມວ່າ “ປະກາດວ່າເປັນສິ່ງທີ່ອະນຸ-
ຍາດແລ້ວ.”

### ພຣະເຢຊູຊົງທຳນວາຍເຖິງມໍລະນາພາບຂອງພຣະອົງ

*(ມຣກ 8:31 9:1; ລກ 9:22-27)*

21ຕັ້ງແຕ່ເວລານັ້ນມາ ພຣະເຢຊູ ຊົງຕັ້ງຕົ້ນສະແດງ ແກ່ພວກສາວົກຂອງຕົນວ່າ ພຣະອົງຈະ
ຕ້ອງສະເດັດໄປກຸງ ເຢຣູຊາເລັມ ແລະຈະຕ້ອງທົນທຸກທໍລະມານຫລາຍປະການຈາກພວກເຖົ້າ
ແກ່, ຈາກພວກປະໂລຫິດຕົນໃຫຍ່, ແລະຈາກພວກນັກທຳເຂົາຈະໄດ້ຂ້າພຣະອົງເສຍ ແລະໃນ
ວັນຖ້ວນສາມພຣະອົງຈະຖືກຊົງບັນດານໃຫ້ເປັນຄືນມາ. 22ຝ່າຍ ເປໂຕ ໄດ້ພາພຣະອົງໄປຕ່າງ-
ຫາກ ແລ້ວຕັ້ງຕົ້ນທູນຫ້າມພຣະອົງຢ່າງແຂງແຮງວ່າ, "ນາຍເອີຍ, ຂໍທ່ານຈົ່ງໄດ້ຮັບຄວາມເມດ
ຕາ ການນີ້ຈະບໍ່ເກີດມີແກ່ທ່ານຈັກເທື່ອ." 23ພຣະອົງຊົງຫັນພຣະພັກໄປຫາ ເປໂຕ ແລ້ວຊົງກ່າວ
ວ່າ, "ອ້າຍຊາຕານ ເຮີຍ, ຈົ່ງຖອຍໜີຈາກເຮົາເສຍ ເຈົ້າເປັນສິ່ງກີດຂວາງເຮົາ ເພາະເຈົ້າຄຶດ
ຢ່າງມະນຸດ ບໍ່ຄຶດຢ່າງ ພຣະເຈົ້າ." 24ຂະນະນັ້ນ ພຣະເຢຊູ ຊົງບອກພວກສາວົກຂອງຕົນວ່າ,
"ຖ້າຜູ້ໃດຢາກຕາມເຮົາມາໃຫ້ຜູ້ນັ້ນຕັດສິດຂອງຕົນເສຍ ແລ້ວຮັບແບກໄມ້ກາງແຂນຂອງຕົນ
ແລ້ວຕິດຕາມເຮົາມາ. 25ເພາະວ່າຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສຍຊີວິດ ແຕ່
ຖ້າຜູ້ໃດຈະເສຍຊີວິດເພາະເຫັນແກ່ເຮົາ ຜູ້ນັ້ນກໍຈະພົ້ນຊີວິດ. 26ເຫດວ່າຖ້າຜູ້ໃດຈະໄດ້ສິ່ງຂອງ
ໝົດທັງໂລກ ແຕ່ຕ້ອງເສຍຊີວິດອັນແທ້ຂອງຕົນ ຜູ້ນັ້ນຈະໄດ້ປະໂຫຍດອັນໃດ ຫລືຜູ້ນັ້ນຈະນຳ
ເອົາສິ່ງໃດໄປແລກເອົາຊີວິດອັນແທ້ຂອງຕົນກັບຄືນມາ. 27ເພາະບຸດມະນຸດຈະມາດ້ວຍສະຫງ່າ
ລາສີແຫ່ງ ພຣະບິດາຂອງຕົນ ແລະພ້ອມດ້ວຍພວກເທວະດາຂອງພຣະອົງ ເມື່ອນັ້ນພຣະອົງຈະ
ຊົງປະທານບຳເໜັດໃຫ້ແກ່ທຸກຄົນຕາມການທີ່ເຂົາເຮັດນັ້ນ. 28ເຮົາບອກພວກທ່ານຕາມຄວາມ
ຈິງວ່າ ໃນພວກຄົນທີ່ຢືນຢູ່ນີ້ມີລາງຄົນທີ່ຈະບໍ່ຮູ້ລົດຄວາມຕາຍ ຈົນກວ່າຈະໄດ້ເຫັນບຸດມະນຸດ
ສະເດັດມາດ້ວຍລາຊະອຳນາດຂອງພຣະອົງ."

## ບົດທີ 17

### ຊົງປ່ຽນລັກສະນະພຣະກາຍ

*(ມຣກ 9:2-13; ລກ 9:28-33)*

1ຄັນລ່ວງໄປໄດ້ຫົກວັນແລ້ວ ພຣະເຢຊູຊົງພາ ເປໂຕ, ຢາໂກໂບ, ແລະ ໂຢຮັນນ້ອງຊາຍຂອງ
ຢາໂກໂບ ຂຶ້ນພູສູງຢູ່ຕ່າງຫາກ. 2ແລ້ວລັກສະນະພຣະກາຍຂອງພຣະອົງກໍປ່ຽນໄປຕໍ່ໜ້າເຂົາ
ພຣະພັກຂອງພຣະອົງກໍເໝືອນແສງອາທິດສ່ອງ ແລະ ເຄື່ອງທົງຂອງພຣະອົງກໍຂາວຜ່ອງ ເໝືອນ
ດັ່ງແສງສະຫວ່າງ. 3ແລະເບິ່ງແມ, ໂມເຊ ແລະ ເອລີຢາ ກໍມາປະກົດແກ່ສາວົກເຫລົ່ານັ້ນ ເຝົ້າ
ສົນທະນາຢູ່ກັບພຣະອົງ. 4ຝ່າຍ ເປໂຕ ທູນ ພຣະເຢຊູ ວ່າ, "ນາຍເອີຍ, ຊຶ່ງພວກຂ້ານ້ອຍຢູ່ທີ່ນີ້ກໍດີ
ຢູ່ ຖ້າທ່ານປະສົງ, ຂ້ານ້ອຍຈະປຸກຕູບສາມຫລັງຂຶ້ນທີ່ນີ້ ສຳລັບທ່ານຫລັງໜຶ່ງ ສຳລັບ ໂມເຊ
ຫລັງໜຶ່ງ ແລະຫລັງໜຶ່ງສຳລັບ ເອລີຢາ." 5ເມື່ອ ເປໂຕ ທູນຍັງບໍ່ທັນຂາດຄຳເບິ່ງແມ, ມີເມກສຸກ
ໃສມາປົກຫຸ້ມເຂົາໄວ້ ແລະເບິ່ງແມ, ມີພຣະສຸລະສຽງອອກມາຈາກເມກນັ້ນວ່າ, "ທ່ານຜູ້ນີ້
ແຫລະ, ເປັນບຸດທີ່ຮັກຂອງເຮົາ ຊຶ່ງເຮົາຊອບໃຈຫລາຍ ພວກເຈົ້າຈົ່ງເຊື່ອຟັງເພິ່ນ." 6ຝ່າຍພວກ
ສາວົກເມື່ອໄດ້ຍິນດັ່ງນັ້ນກໍກົ້ມໜ້າຂາບລົງແລະຢ້ານຫລາຍ. 7ພຣະເຢຊູ ຈຶ່ງສະເດັດມາຖືກຕ້ອງ

ເຂົາໂດຍຊົງກ່າວວ່າ, "ຈົ່ງລຸກຂຶ້ນ ຢ່າຊູ່ຢ້ານ." 8ເມື່ອເງີຍໜ້າຂຶ້ນແລ້ວເຂົາກໍບໍ່ເຫັນຜູ້ໃດ ເຫັນ
ແຕ່ພຣະເຢຊູຜູ້ດຽວ.
9ເມື່ອເຂົາກຳລັງລົງມາຈາກພູນັ້ນ ພຣະເຢຊູຊົງສັ່ງເຂົາໄວ້ວ່າ, "ນິມິດຊຶ່ງພວກທ່ານໄດ້ເຫັນນັ້ນ
ຢ່າໄດ້ບອກແກ່ຜູ້ໃດ ຈົນກວ່າບຸດມະນຸດຈະໄດ້ເປັນຄືນມາຈາກຕາຍ." 10ພວກສາວົກກໍທູນຖາມ
ພຣະອົງວ່າ, "ຖ້າຢ່າງນັ້ນ ເຫດສັນໃດພວກນັກທຳເຄີຍເວົ້າວ່າ ເອລີຢາຈະຕ້ອງມາກ່ອນ?".
11ພຣະອົງຊົງຕອບວ່າ, "ຈິງຢູ່ ເອລີຢາຈະມາກ່ອນ ແລະເຮັດໃຫ້ສິ່ງທັງປວງຄືນສູ່ສະພາບເດີມ.
12ແຕ່ເຮົາບອກພວກທ່ານວ່າ ເອລີຢານັ້ນໄດ້ມາແລ້ວ ແລະເຂົາບໍ່ຮູ້ຈັກເພິ່ນ ແຕ່ເຂົາໄດ້ເຮັດແກ່
ເພິ່ນຕາມໃຈຊອບ ສ່ວນບຸດມະນຸດກໍຈະຕ້ອງທົນທຸກທໍລະມານດ້ວຍມືຂອງເຂົາເໝືອນກັນ'."
13ແລ້ວພວກສາວົກຈຶ່ງເຂົ້າໃຈວ່າ ພຣະອົງຊົງກ່າວກັບເຂົາເຖິງເລື່ອງໂຢຮັນບັບຕິສະໂຕ.

## ຊົງໂຜດເດັກນ້ອຍຜູ້ມີຜີສິງ

*(ມຣກ 9:14-29; ລກ 9:37-43)*

14ເມື່ອ ພຣະເຢຊູ ສະເດັດພ້ອມກັບສາວົກສາມຄົນມາເຖິງປະຊາຊົນທັງຫລາຍ ແລ້ວມີຊາຍຄົນ
ໜຶ່ງມາຫາພຣະອົງຄຸເຂົ່າລົງ. 15ທູນວ່າ, "ນາຍເອີຍ, ຂໍໂຜດເມດຕາລູກຊາຍຂອງຂ້ານ້ອຍແດ່-
ທ້ອນ ດ້ວຍວ່າມັນເປັນບ້າໝູ ມີຄວາມທຸກລຳບາກຫລາຍເພາະມັນຕົກໃສ່ໄຟໃສ່ນ້ຳຫລາຍເທື່ອ.
16ຂ້ານ້ອຍໄດ້ພາລູກມາຫາພວກສິດຂອງທ່ານແລ້ວ ແຕ່ເຂົາເຮັດໃຫ້ມັນດີບໍ່ໄດ້." 17ພຣະເຢຊູຊົງ
ຕອບວ່າ, "ໂອຄົນໃນສະໄໝທີ່ຂາດຄວາມເຊື່ອແລະຊົ່ວຊ້າເຮີຍ ເຮົາຈະຕ້ອງຢູ່ກັບພວກເຈົ້າເທິງ
ປານໃດ ເຮົາຈະຕ້ອງອົດທົນກັບພວກເຈົ້ານານປານໃດ ຈົ່ງພາມັນມາຫາເຮົາທີ່ນີ້ສາ." 18ພຣະ-
ເຢຊູຊົງກ່າວຊຳລະຜີຮ້າຍນັ້ນ ແລ້ວມັນໄດ້ອອກໜີໄປ ຕັ້ງແຕ່ໂມງນັ້ນໄປເດັກນ້ອຍນັ້ນກໍດີປົກ-
ກະຕິ. 19ຕໍ່ມາພວກສາວົກໄດ້ເຂົ້າມາຫາ ພຣະເຢຊູ ຕ່າງຫາກທູນຖາມວ່າ, "ເພາະເຫດໃດພວກ
ຂ້ານ້ອຍຈຶ່ງຂັບໄລ່ຜີນັ້ນອອກບໍ່ໄດ້?". 20ພຣະເຢຊູຊົງຕອບເຂົາວ່າ, "ເພາະເຫດພວກທ່ານມີ
ຄວາມເຊື່ອນ້ອຍ ດ້ວຍເຮົາບອກພວກທ່ານຕາມຄວາມຈິງວ່າ ຖ້າພວກທ່ານມີຄວາມເຊື່ອທໍ່ກັບ
ເມັດຜັກກາດເມັດໜຶ່ງ ພວກທ່ານຈະສັ່ງພູໜ່ວຍນີ້ວ່າ 'ຈົ່ງເຄື່ອນຈາກບ່ອນນີ້ໄປຢູ່ບ່ອນນັ້ນ' ມັນ
ກໍຈະເຄື່ອນໄປ ບໍ່ມີສິ່ງໃດທີ່ທ່ານເຮັດບໍ່ໄດ້. 21[ແຕ່ຜີແນວນີ້ບໍ່ເຄີຍຖືກຂັບອອກ ເວັ້ນແຕ່ດ້ວຍ
ການອ້ອນວອນແລະການຖືສິນອົດອາຫານ.]

## ຊົງທຳນວາຍເຖິງມໍລະນາພາບຂອງພຣະອົງ

*(ມຣກ 9:30-32; ລກ 9:43-45)*

22ຄັນ ພຣະເຢຊູ ຊົງປະຊຸມກັບພວກສາວົກໃນແຂວງ ຄາລີເລ ພຣະອົງຊົງບອກເຂົາວ່າ, "ບຸດ
ມະນຸດຈະຕ້ອງຖືກມອບໄວ້ໃນມືມະນຸດ. 23ເຂົາຈະຂ້າເພິ່ນເສຍ ໃນວັນຖ້ວນສາມເພິ່ນຈະຖືກຊົງ
ບັນດານໃຫ້ເປັນຄືນມາ" ພວກສາວົກກໍມີຄວາມທຸກໜັກໃຈ.

## ການເສຍຄ່າບຳລຸງພຣະວິຫານ

24ເມື່ອມາເຖິງ ເມືອງ ກາເປນາອູມ ແລ້ວ ມີພວກເກັບຄ່າບຳລຸງພຣະວິຫານມາຫາ ເປໂຕ ຖາມ
ວ່າ, "ອາຈານຂອງພວກທ່ານບໍ່ເສຍເງິນບຳລຸງພຣະວິຫານຫລື". 25ເປໂຕຕອບວ່າ, "ເສຍ" ເມື່ອ
ເປໂຕ ເຂົ້າໄປໃນເຮືອນ ພຣະເຢຊູ ຊົງກ່າວຂຶ້ນກ່ອນຖາມວ່າ, "ຊີໂມນ ເອີຍ, ທ່ານຄຶດຢ່າງໃດ

ພວກເຈົ້າແຜ່ນດິນເຄີຍເກັບພາສີແລະເງິນສ່ວຍຈາກຜູ້ໃດ ຈາກໂອລົດຫລືຈາກຜູ້ອື່ນ?". 26ເປໂຕ
ທູນຕອບວ່າ, "ເຄີຍເກັບຈາກຜູ້ອື່ນ" ພຣະເຢຊູຊົງກ່າວວ່າ, "ຖ້າຢ່າງນັ້ນ ໂອລົດກໍບໍ່ຕ້ອງເສຍ.
27ແຕ່ເພື່ອບໍ່ໃຫ້ເຂົາເສຍໃຈ ທ່ານຈົ່ງໄປຕຶກເບັດທີ່ທະເລ ເມື່ອໄດ້ປາໂຕແຮກຂຶ້ນມາໃຫ້ງະປາກ
ມັນ ແລ້ວທ່ານຈະພົບເງິນຫລຽນໜຶ່ງ[ກ] ຈົ່ງເອົາເງິນນັ້ນໄປເສຍຄ່າບຳລຸງພຣະວິຫານສຳລັບເຮົາ
ກັບທ່ານ."

# ບົດທີ 18

## ໃຜເປັນໃຫຍ່ໃນສະຫວັນ

*(ມຣກ 9:33-37; ລກ 9:46-48)*

1ໃນເວລານັ້ນພວກສາວົກມາຫາພຣະເຢຊູທູນວ່າ, "ໃຜເປັນໃຫຍ່ໃນລາຊະອານາຈັກສະ-
ຫວັນ?". 2ພຣະເຢຊູຊົງເອີ້ນເອົາເດັກນ້ອຍຄົນໜຶ່ງມາໃຫ້ຢືນຖ້າມກາງເຂົາ. 3ແລ້ວຊົງກ່າວວ່າ,
"ເຮົາບອກພວກທ່ານຕາມຄວາມຈິງວ່າ ຖ້າພວກທ່ານບໍ່ກັບໃຈແລະກາຍເປັນເໝືອນເດັກນ້ອຍ
ທ່ານຈະເຂົ້າໃນລາຊະແຜ່ນດິນສະຫວັນບໍ່ໄດ້ຈັກເທື່ອ. 4ເຫດສັນນັ້ນຖ້າຜູ້ໃດຖ່ອມຕົວລົງເໝືອນ
ເດັກນ້ອຍຜູ້ນີ້ ຜູ້ນັ້ນແຫລະ, ເປັນໃຫຍ່ໃນລາຊະອານາຈັກສະຫວັນ. 5ຖ້າຜູ້ໃດຈະຮັບເດັກນ້ອຍ
ຜູ້ໜຶ່ງຢ່າງນີ້ໄວ້ໃນນາມຂອງເຮົາ ຜູ້ນັ້ນກໍໄດ້ຮັບເຮົາ.

## ເຫດໃຫ້ຫລົງຜິດ

*(ມຣກ 9:42-48; ລກ 17:1-6)*

6"ຖ້າຜູ້ໃດເຮັດໃຫ້ຄົນໜຶ່ງໃນໝູ່ເດັກນ້ອຍເຫລົ່ານີ້ທີ່ເຊື່ອໃນເຮົາຫລົງຜິດ ຖ້າເອົາຫີນໂມ້ກ້ອນ
ໃຫຍ່ຜູກຄໍຜູ້ນັ້ນຈົມລົງນ້ຳທະເລເລິກເສຍກໍດີກວ່າ. 7ວິບັດແກ່ໂລກນີ້ເພາະເຫດທີ່ໃຫ້ເກີດການ
ຫລົງຜິດ ເພາະວ່າຈຳເປັນຕ້ອງມີເຫດໃຫ້ຫລົງຜິດ ແຕ່ວິບັດແກ່ຜູ້ທີ່ກໍ່ເຫດໃຫ້ເກີດການຫລົງຜິດ
ນັ້ນ. 8ຖ້າມືຫລືຕີນຂອງທ່ານເຮັດໃຫ້ຕົນຫລົງຜິດ ຈົ່ງຕັດຖິ້ມເສຍ ທີ່ຈະເຂົ້າໃນຊີວິດດ້ວຍມືແລະ
ຕີນກຸດຫລືພິການ ຍັງດີກວ່າມີມືແລະຕີນສອງເບື້ອງ ແຕ່ຕ້ອງຖືກຖິ້ມໃສ່ໄຟທີ່ໄໝ້ຢູ່ເປັນນິດ.
9ຖ້າຕາຂອງທ່ານເຮັດໃຫ້ຕົນຫລົງຜິດ ຈົ່ງຄວັດອອກຖິ້ມເສຍ ທີ່ຈະເຂົ້າໃນຊີວິດດ້ວຍຕາເບື້ອງ
ດຽວ ຍັງດີກວ່າມີຕາສອງເບື້ອງ ແຕ່ຕ້ອງຖືກຖິ້ມໃສ່ໄຟນະລົກ."

## ແກະທີ່ເສຍ

*(ມຣກ 14:3-7)*

10"ຈົ່ງລະວັງໃຫ້ດີ ຢ່າຄຶດດູໝິ່ນເດັກນ້ອຍໝູ່ນີ້ຈັກຄົນໜຶ່ງ ດ້ວຍເຮົາບອກພວກທ່ານວ່າ ເທ-
ວະດາປະຈຳຂອງເຂົາໃນສະຫວັນເຝົ້າຢູ່ສະເໝີ ຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນ
ສະຫວັນ. 11ດ້ວຍວ່າບຸດມະນຸດໄດ້ມາໂຜດເອົາອັນທີ່ຫລົງເສຍໄປນັ້ນໃຫ້ພົ້ນ. 12ພວກທ່ານຄຶດ
ເຫັນຢ່າງໃດ ຖ້າຜູ້ໜຶ່ງມີແກະຢູ່ຮ້ອຍໂຕ ແລະໂຕໜຶ່ງຫລົງເສຍໄປຈາກຝູງ ຜູ້ນັ້ນຈະບໍ່ປະແກະ
ເກົ້າສິບເກົ້າໂຕໄວ້ຢູ່ພູ ແລ້ວໄປຊອກຫາໂຕທີ່ຫລົງເສຍໄປນັ້ນຫລື. 13ເຮົາບອກພວກທ່ານຕາມ

---

[ກ]ເງິນຫລຽນນີ້ພໍສອງທໍ່ກັບເງິນສ່ວຍປະຈຳປີທີ່ຊາຍທຸກຄົນຕ້ອງເສຍເປັນຄ່າບຳລຸງການນະມັດສະການໃນ
ພຣະວິຫານ.

ຄວາມຈິງວ່າ ຖ້າພົບແກະໂຕທີ່ເສຍ ຜູ້ນັ້ນຄົງມີຄວາມຊົມຊື່ນຍິນດີໃນແກະໂຕນັ້ນ ຫລາຍກວ່າ
ແກະເກົ້າສິບເກົ້າໂຕທີ່ບໍ່ຫລົງເສຍໄປ. [14]ດັ່ງນັ້ນແຫລະ, ພຣະບິດາຂອງພວກທ່ານຜູ້ຊົງສະຖິດ
ຢູ່ໃນສະຫວັນ ຈຶ່ງບໍ່ຊົງປາດຖະໜາໃຫ້ຜູ້ນ້ອຍເຫລົ່ານີ້ຈິບຫາຍແມ່ນແຕ່ຄົນດຽວ.”

## ພີ່ນ້ອງຜູ້ເຮັດຜິດຕໍ່ທ່ານ

*(ລກ 17:3)*

[15]“ຖ້າພີ່ນ້ອງຂອງທ່ານເຮັດຜິດບາບ [ຕໍ່ທ່ານ] ຈົ່ງໄປແຈ້ງຄວາມຜິດນັ້ນແກ່ເພິ່ນສອງຕໍ່ສອງ
ເທົ່ານັ້ນ ຖ້າເພິ່ນຍອມຟັງ ທ່ານກໍໄດ້ພີ່ນ້ອງຄືນມາ. [16]ແຕ່ຖ້າເພິ່ນບໍ່ຍອມຟັງ ທ່ານຈົ່ງເອົາຄົນ
ໜຶ່ງຫລືສອງຄົນໄປນຳໃຫ້ເປັນພະຍານສອງສາມປາກ ເພື່ອທຸກຄຳຈະຖືເປັນຫລັກຖານໄດ້.
[17]ຖ້າເພິ່ນບໍ່ຍອມຟັງຄົນເຫລົ່ານັ້ນ ຈົ່ງໄປແຈ້ງຄວາມນັ້ນຕໍ່ຄຣິສຕະຈັກ ແລະຖ້າເພິ່ນບໍ່ຍອມຟັງ
ຄຣິສຕະຈັກອີກ ກໍໃຫ້ຖືເສຍວ່າເພິ່ນເປັນເໝືອນຄົນນອກສາດສະໜາແລະຄົນເກັບພາສີ.

[18]ເຮົາບອກພວກທ່ານຕາມຄວາມຈິງວ່າ ສິ່ງໃດໆ ທີ່ພວກທ່ານຈະຜູກມັດໄວ້[ກ] ໃນໂລກ ກໍ
ຈະຊົງຜູກມັດໄວ້ແລ້ວໃນສະຫວັນ ແລະສິ່ງໃດໆທີ່ພວກທ່ານຈະແກ້[ຂ] ໃນໂລກ ກໍຈະຊົງແກ້ໃຫ້
ຫລຸດເສຍແລ້ວໃນສະຫວັນເໝືອນກັນ. [19]ເຮົາບອກແກ່ພວກທ່ານອີກວ່າ ຖ້າໃນພວກທ່ານທີ່ຢູ່
ໃນໂລກສອງຄົນຈະຮ່ວມໃຈກັນຂໍສິ່ງໜຶ່ງສິ່ງໃດ ພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນກໍ
ຈະຊົງກະທຳໃຫ້. [20]ດ້ວຍວ່າມີສອງຫລືສາມຄົນປະຊຸມກັນໃນນາມຂອງເຮົາຢູ່ບ່ອນໃດ ເຮົາກໍຢູ່
ຖ້າມກາງເຂົາຢູ່ບ່ອນນັ້ນແຫລະ.”

## ຄຳອຸປະມາເລື່ອງການອະໄພໂທດໃຫ້ກັນແລະກັນ

[21]ເມື່ອນັ້ນເປໂຕໄດ້ມາທູນຖາມພຣະອົງວ່າ, “ນາຍເອີຍ, ຖ້າພີ່ນ້ອງຂອງຂ້ານ້ອຍເຮັດຜິດຕໍ່
ຂ້ານ້ອຍຫລາຍເທື່ອ ຂ້ານ້ອຍຕ້ອງຍົກຜິດໃຫ້ເພິ່ນເຖິງຈັກເທື່ອ ເຖິງເຈັດເທື່ອຫລື?”. [22]ພຣະ-
ເຢຊູຊົງຕອບວ່າ, “ເຮົາບໍ່ໄດ້ບອກພຽງເຈັດເທື່ອເທົ່ານັ້ນ ແຕ່ເຖິງເຈັດສິບເທື່ອຄູນກັບເຈັດ.

[23]“ເຫດສັນນັ້ນລາຊະອານາຈັກສະຫວັນປຽບເໝືອນເຈົ້າກະສັດອົງໜຶ່ງ ຊົງປະສົງຢາກຄິດ
ບັນຊີເງິນທີ່ພວກຂ້າໃຊ້ເປັນໜີ້. [24]ເມື່ອຊົງຕັ້ງຕົ້ນຄິດບັນຊີຢູ່ນັ້ນ ເຂົາພາຄົນຜູ້ໜຶ່ງທີ່ເປັນໜີ້ໝື່ນ
ຕາລັນຕົນມາເຝົ້າ. [25]ເມື່ອຜູ້ນັ້ນບໍ່ມີສິ່ງໃດຈະໃຊ້ ທ່ານຈຶ່ງສັ່ງໃຫ້ຂາຍຕົວກັບທັງເມຍແລະລູກ
ແລະບັນດາສິ່ງຂອງທີ່ເຂົາມີຢູ່ເອົາມາໃຊ້ໜີ້ເສຍ. [26]ຄົນໃຊ້ຜູ້ນັ້ນຈຶ່ງຂາບລົງວອນຕໍ່ທ່ານວ່າ,
‘ໂອຍທ່ານເອີຍ, ຂໍຊົງໂຜດຜ່ອນຜັນຂ້ານ້ອຍກ່ອນ ແລ້ວຂ້ານ້ອຍຈະຫາໃຊ້ແທນໃຫ້ໝົດ’.
[27]ເຈົ້າອົງນັ້ນມີພຣະໄທເມດຕາຈຶ່ງປ່ອຍຕົວມັນໄປແລະຍົກໜີ້ໃຫ້ດ້ວຍ. [28]ແຕ່ເມື່ອຂ້າໃຊ້ຜູ້ນັ້ນ
ອອກໄປ ກໍພົບເພື່ອນຜູ້ໜຶ່ງທີ່ເປັນຂ້າໃຊ້ດ້ວຍກັນຊຶ່ງເປັນໜີ້ຕົນໜຶ່ງຮ້ອຍເດນາຣິອົນ ມັນຈຶ່ງຈັບ
ເພື່ອນຄົນນັ້ນບີບຄໍວ່າ ‘ເງິນທີ່ມຶງເປັນໜີ້ກູນັ້ນເອົາມາແທນເສຍແມ’. [29]ເພື່ອນຄົນນັ້ນຈຶ່ງຂາບລົງ
ອ້ອນວອນວ່າ ‘ຂໍຜ່ອນຜັນໃຫ້ເຮົາເສຍກ່ອນທ້ອນ ແລ້ວເຮົາຈະໃຊ້ໃຫ້ທັງໝົດ’. [30]ແຕ່ມັນບໍ່ຍອມ
ຈຶ່ງຈັບລູກໜີ້ຜູ້ນັ້ນໄປຂັງໄວ້ຈົນກວ່າຈະໃຊ້ໜີ້ນັ້ນ. [31]ຝ່າຍພວກເພື່ອນຂ້າໃຊ້ດ້ວຍກັນ ເມື່ອໄດ້
ເຫັນເຫດການຢ່າງນັ້ນກໍພາກັນທຸກໃຈຫລາຍຈຶ່ງນຳເຫດການທັງປວງໄປກາບທູນຕໍ່ເຈົ້າອົງນັ້ນ.

[ກ]ເງິນຫລຽນນີ້ພໍສອງທໍ່ກັບເງິນສ່ວຍປະຈຳປີທີ່ຊາຍທຸກຄົນຕ້ອງເສຍເປັນຄ່າບຳລຸງການນະມັດສະການໃນ
ພຣະວິຫານ. [ຂ]ເບິ່ງ ມທ 16:19 (ໝາຍເຫດ)

[32]ທ່ານຈຶ່ງເອີ້ນຂ້າໃຊ້ຜູ້ນັ້ນມາເຝົ້າແລ້ວຊົງກ່າວວ່າ 'ອ້າຍຂີ້ຂ້າຊາດຊົ່ວເຮີຍ, ກູໄດ້ຍົກໜີ້ໃຫ້ມຶງ
ທັງໝົດເພາະມຶງໄດ້ອ້ອນວອນຂໍນຳກູ. [33]ມຶງຄວນຈະສົງສານເພື່ອນຂອງມຶງເໝືອນດັ່ງກູໄດ້ສົງ-
ສານມຶງ ບໍ່ແມ່ນຫລື'. [34]ແລ້ວເຈົ້າອົງນັ້ນກໍຮ້າຍ ຈຶ່ງມອບມັນໄວ້ແກ່ເຈົ້າໜ້າທີ່ໃຫ້ທໍລະມານຈົນ
ກວ່າຈະໃຊ້ໜີ້ໃຫ້ໝົດ. [35]ຢ່າງນັ້ນແຫລະ, ພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນ ກໍຈະ
ເຮັດດັ່ງນັ້ນແກ່ພວກທ່ານທຸກຄົນ ຖ້າພວກທ່ານບໍ່ຍົກຄວາມຜິດໃຫ້ພີ່ນ້ອງຂອງຕົນດ້ວຍສຸດໃຈ."

# ບົດທີ 19

## ຊົງສອນເລື່ອງລັກສະນະຜົວເມຍ

*(ມຣກ 10:1-12; ລກ 16:18)*

[1]ເມື່ອພຣະເຢຊູຊົງກ່າວຄຳເຫລົ່ານີ້ຈົບລົງແລ້ວ ພຣະອົງໄດ້ສະເດັດຈາກແຂວງຄາລີເລ ເຂົ້າ
ໄປໃນເຂດແດນແຂວງຢູດາຍຟາກແມ່ນ້ຳຢໍແດນເບື້ອງນັ້ນ. [2]ມີປະຊາຊົນຫລວງຫລາຍຕິດຕາມ
ພຣະອົງໄປ ແລ້ວພຣະອົງໄດ້ຊົງໂຜດໃຫ້ເຂົາດີພະຍາດໃນທີ່ນັ້ນ.
[3]ຝ່າຍພວກຟາຣີຊາຍໄດ້ເຂົ້າມາທົດລອງພຣະອົງທູນວ່າ, "ທີ່ຜູ້ຊາຍຈະຢ່າຮ້າງກັບເມຍເພາະ
ເຫດໃດກໍຕາມ ຈະຖືກຕ້ອງຕາມກົດບັດຍັດຫລື." [4]ພຣະອົງຊົງຕອບເຂົາວ່າ, "ພວກທ່ານບໍ່ໄດ້
ອ່ານຫລືວ່າ 'ພຣະຜູ້ຊົງສ້າງມະນຸດແຕ່ເດີມໄດ້ຊົງສ້າງໃຫ້ເປັນຊາຍແລະຍິງ'. [5]ໂດຍຊົງກ່າວວ່າ
'ດ້ວຍເຫດນັ້ນຜູ້ຊາຍຈຶ່ງລະພໍ່ແມ່ຂອງຕົນໄປຜູກພັນຢູ່ກັບເມຍ ແລະເຂົາທັງສອງຈະເປັນກາຍ
ອັນດຽວກັນ. [6]ເຂົາຈຶ່ງບໍ່ເປັນສອງຕໍ່ໄປແຕ່ເປັນກາຍອັນດຽວ' ເຫດສັນນັ້ນຊຶ່ງພຣະເຈົ້າໄດ້ຊົງໃຫ້
ເຂົ້າຮ່ວມແອກກັນແລ້ວນັ້ນ ຢ່າໃຫ້ມະນຸດເຮັດໃຫ້ພາກຈາກກັນ." [7]ເຂົາຈຶ່ງຍ້ອນຖາມພຣະອົງ
ວ່າ, "ຖ້າຢ່າງນັ້ນເປັນຫຍັງໂມເຊຈຶ່ງສັ່ງໃຫ້ເຮັດໜັງສືຢ່າຮ້າງ ແລ້ວໃຫ້ປະໄດ້". [8]ພຣະອົງຊົງ
ຕອບເຂົາວ່າ, "ທີ່ໂມເຊໄດ້ອະນຸຍາດໃຫ້ພວກທ່ານປະເມຍຂອງຕົນໄດ້ ກໍເພາະໃຈຂອງພວກ
ທ່ານແຂງກະດ້າງ ແຕ່ເມື່ອເດີມບໍ່ເປັນຢ່າງນັ້ນ. [9]ຝ່າຍເຮົາບອກພວກທ່ານວ່າ ຜູ້ໃດຈະປະເມຍ
ຂອງຕົນໂດຍເມຍບໍ່ເປັນຊູ້ກັບຊາຍອື່ນແລ້ວໄປເອົາເມຍໃໝ່ ຜູ້ນັ້ນມີຜິດໃນຖານຫລິ້ນຊູ້ ແລະຜູ້
ໃດຈະເອົາແມ່ຮ້າງນັ້ນມາເປັນເມຍ ກໍຜິດໃນຖານຫລິ້ນຊູ້ເໝືອນກັນ." [10]ພວກສາວົກຈຶ່ງທູນ
ພຣະອົງວ່າ, "ຖ້າລັກສະນະຜົວເມຍເປັນຢ່າງນັ້ນ ການເອົາຜົວເມຍກໍບໍ່ເປັນປະໂຫຍດ."
[11]ພຣະອົງຊົງຕອບເຂົາວ່າ, "ບໍ່ແມ່ນໝົດທຸກຄົນທີ່ຈະຮັບປະຕິບັດຕາມຂໍ້ນີ້ໄດ້ ເວັ້ນແຕ່ຜູ້ທີ່ຊົງ
ໂຜດເທົ່ານັ້ນ. [12]ດ້ວຍຜູ້ທີ່ເປັນຕອນແຕ່ກຳເນີດກໍມີ ຜູ້ທີ່ມະນຸດເຮັດໃຫ້ເປັນຕອນກໍມີ ຜູ້ທີ່ເຮັດໃຫ້
ຕົນເອງເປັນຕອນເພາະເຫັນແກ່ລາຊະອານາຈັກກໍມີ ໃຜຮັບປະຕິບັດໄດ້ກໍໃຫ້ຮັບເອົາ."

## ຊົງອວຍພອນເດັກນ້ອຍ

*(ມຣກ 10:13-16; ລກ 18:15-17)*

[13]ຂະນະນັ້ນເຂົາໄດ້ພາພວກເດັກນ້ອຍມາຫາພຣະອົງ ເພື່ອຈະໃຫ້ພຣະອົງຊົງວາງພຣະຫັດ
ແລະອ້ອນວອນເພື່ອເຂົາ ແຕ່ພວກສາວົກໄດ້ຫ້າມປາມໄວ້. [14]ຝ່າຍພຣະເຢຊູຊົງກ່າວວ່າ, "ຈົ່ງ
ປ່ອຍໃຫ້ເດັກນ້ອຍມາຫາເຮົາ ຢ່າຂູ່ຫ້າມເຂົາ ເພາະວ່າລາຊະແຜ່ນດິນເປັນຂອງ[ກ] ຄົນທີ່ເໝືອນ

[ກ]ພາສາເດີມອາດຈະໝາຍຄວາມວ່າ "ເປັນກຳມະສິດຂອງ" ຫລືວ່າ "ເປັນທີ່ປະກອບດ້ວຍ"

ເດັກນ້ອຍເຫລົ່ານີ້ແຫລະ.” [15]ເມື່ອພຣະອົງຊົງວາງພຣະຫັດໃສ່ພວກເດັກນ້ອຍແລ້ວ ກໍໄດ້ສະ-
ເດັດໄປຈາກບ່ອນນັ້ນ.

## ເລື່ອງເສດຖີໜຸ່ມ

*(ມຣກ 10:17-31; ລກ 18:18-30)*

[16]ແລະເບິ່ງແມ, ມີຄົນໜຶ່ງເຂົ້າມາທູນພຣະອົງວ່າ, “ອາຈານເອີຍ, ຂ້ານ້ອຍຈະຕ້ອງເຮັດດີ
ປະການໃດ ຈຶ່ງຈະໄດ້ຊີວິດອັນຕະຫລອດໄປເປັນນິດ.” [17]ພຣະອົງຊົງຕອບວ່າ, “ເປັນຫຍັງທ່ານ
ຖາມເຮົາເຖິງສິ່ງທີ່ດີ ຜູ້ດີມີແຕ່ຜູ້ດຽວ ຖ້າທ່ານປາດຖະໜາຈະເຂົ້າໃນຊີວິດ ໃຫ້ຖືຮັກສາຂໍ້ບັນຍັດ
ທັງຫລາຍໄວ້.” [18]ຜູ້ນັ້ນທູນຖາມວ່າ, “ພຣະບັນຍັດຂໍ້ໃດ?” ພຣະເຢຊູຊົງຕອບວ່າ, “ຄືຂໍ້ທີ່ວ່າ
‘ຢ່າຂ້າຄົນ, ຢ່າມິດສາຈານຈາກຜົວຈາກເມຍ, ຢ່າລັກຊັບ, ຢ່າເປັນພະຍານບໍ່ຈິງ. [19]ຈົ່ງນັບຖືບິ-
ດາມານດາຂອງຕົນ ແລະຈົ່ງຮັກເພື່ອນບ້ານເໝືອນຮັກຕົວເອງ’.” [20]ຄົນໜຸ່ມນັ້ນທູນຖາມພຣະອົງ
ອີກວ່າ, “ຂໍ້ເຫລົ່ານັ້ນຂ້ານ້ອຍໄດ້ຖືຮັກສາມາແລ້ວ ຂ້ານ້ອຍຍັງຂາດສິ່ງໃດອີກ.” [21]ພຣະເຢຊູຊົງ
ຕອບວ່າ, “ຖ້າທ່ານປາດຖະໜາຢາກເປັນຜູ້ດີຄົບຖ້ວນ ຈົ່ງໄປຂາຍບັນດາສິ່ງຂອງຊຶ່ງທ່ານມີຢູ່
ແຈກທານແກ່ຄົນອະນາຖາ ແລ້ວທ່ານຈະມີຊັບສົມບັດໃນສະຫວັນແລະຈົ່ງຕາມເຮົາມາເສຍ.”
[22]ເມື່ອຄົນໜຸ່ມໄດ້ຍິນດັ່ງນັ້ນກໍອອກໄປເປັນທຸກໜັກໃຈເພາະຕົນມີຊັບສິ່ງຂອງຈຳນວນຫລາຍ.

[23]ພຣະເຢຊູຊົງກ່າວກັບພວກສາວົກຂອງຕົນວ່າ, “ເຮົາບອກພວກທ່ານຕາມຄວາມຈິງວ່າ ຄົນ
ຮັ່ງມີຈະເຂົ້າໄປໃນລາຊະແຜ່ນດິນສະຫວັນກໍຍາກ. [24]ເຮົາບອກພວກທ່ານອີກວ່າ ໂຕໂອດໂອຈະ
ລອດຮູເຂັມກໍງ່າຍກວ່າຄົນຮັ່ງມີຈະເຂົ້າໄປໃນແຜ່ນດິນຂອງພຣະເຈົ້າ.” [25]ເມື່ອພວກສາວົກໄດ້
ຍິນດັ່ງນັ້ນກໍປະຫລາດໃຈຫລາຍ ຈຶ່ງເວົ້າວ່າ, “ຖ້າຢ່າງນັ້ນໃຜຈະພົ້ນໄດ້.” [26]ພຣະເຢຊູທອດ
ພຣະເນດພວກສາວົກແລ້ວຊົງກ່າວວ່າ, “ຝ່າຍມະນຸດກໍເຫລືອກຳລັງທີ່ຈະເຮັດໄດ້ ແຕ່ຝ່າຍ
ພຣະເຈົ້າຊົງເຮັດໄດ້ທຸກສິ່ງ.” [27]ແລ້ວເປໂຕທູນຕອບວ່າ, “ເບິ່ງແມ, ຂ້ານ້ອຍທັງຫລາຍໄດ້ສະ-
ຫລະໝົດທຸກສິ່ງແລ້ວ ແລະໄດ້ຕິດຕາມທ່ານມາ ພວກຂ້ານ້ອຍຈະໄດ້ຫຍັງແດ່?”. [28]ພຣະເຢຊູ
ຊົງກ່າວກັບເຂົາວ່າ, “ເຮົາບອກພວກທ່ານຕາມຄວາມຈິງວ່າ ໃນໂລກໃໝ່ ຄາວເມື່ອບຸດມະນຸດ
ຈະນັ່ງເທິງພຣະທີ່ນັ່ງອັນຮຸ່ງເຮືອງຂອງຕົນນັ້ນ ຝ່າຍພວກທ່ານທີ່ຕິດຕາມເຮົາມາກໍຈະໄດ້ນັ່ງເທິງ
ບັນລັງສິບສອງບ່ອນ ພິພາກສາພວກອິສຣາເອນ ສິບສອງຕະກຸນເໝືອນກັນ. [29]ຜູ້ໃດສະຫລະ
ເຮືອນ, ຫລືອ້າຍເອື້ອຍນ້ອງ, ຫລືບິດາມານດາ, ຫລືລູກ ຫລືໄຮ່ນາເພາະເຫັນແກ່ນາມຂອງເຮົາ
ຜູ້ນັ້ນຈະໄດ້ຮັບຜົນຕອບແທນຮ້ອຍທໍ່ ແລະຈະໄດ້ຮັບມໍລະດົກຄືຊີວິດອັນຕະຫລອດໄປເປັນນິດ.
[30]ແຕ່ມີຫລາຍຄົນທີ່ເປັນຕົ້ນຈະກັບເປັນປາຍ ແລະຜູ້ທີ່ເປັນປາຍຈະກັບເປັນຕົ້ນ.”

# ບົດທີ 20

## ຄົນທຳງານໃນສວນອະງຸ່ນ

[1]“ເພາະວ່າລາຊະອານາຈັກສະຫວັນປຽບເໝືອນພໍ່ເຮືອນຜູ້ໜຶ່ງທີ່ອອກໄປແຕ່ເຊົ້າໆ ເພື່ອຈ້າງ
ຄົນມາທຳງານໃນສວນອະງຸ່ນຂອງຕົນ. [2]ຄັນຕົກລົງກັບລູກຈ້າງວັນລະໜຶ່ງເດນາຣີອົນແລ້ວ ຈຶ່ງ
ໃຊ້ໃຫ້ໄປທຳງານໃນສວນຂອງຕົນ. [3]ພໍສາມໂມງເຊົ້າເຈົ້າຂອງສວນກໍອອກໄປອີກ ແລະພົບຄົນ

ອື່ນຢືນຢູ່ລ້າໆ ກາງຕະຫລາດ. 4ເພິ່ນຈຶ່ງເວົ້າກັບເຂົາວ່າ 'ພວກເຈົ້າຈົ່ງໄປທຳງານໃນສວນອະ-
ງຸ່ນຂອງຂ້ອຍເໝືອນກັນ ແລະຂ້ອຍຈະໃຫ້ຄ່າຈ້າງແກ່ພວກເຈົ້າຕາມສົມຄວນ' ແລ້ວເຂົາກໍພາ-
ກັນໄປ. 5ພໍເວລາຫົກໂມງ[ກ] ແລະເວລາເກົ້າໂມງ ເພິ່ນກໍອອກໄປອີກເຮັດເໝືອນແຕ່ກ່ອນ.
6ປະມານສິບເອັດໂມງ ເພິ່ນກໍອອກໄປອີກເທື່ອໜຶ່ງ ພົບອີກພວກໜຶ່ງຢືນຢູ່ຈຶ່ງຖາມເຂົາວ່າ 'ເປັນ
ຫຍັງພວກເຈົ້າຈຶ່ງຢືນຢູ່ນີ້ໝົດມື້ລ້າໆ'. 7ເຂົາຕອບວ່າ 'ເພາະບໍ່ມີຜູ້ໃດຈ້າງ' ເພິ່ນຈຶ່ງບອກເຂົາວ່າ
'ພວກເຈົ້າຈົ່ງໄປທຳງານໃນສວນອະງຸ່ນເໝືອນກັນ'. 8ຄັນເຖິງເວລາຄໍ່າແລ້ວ ເຈົ້າຂອງສວນຈຶ່ງ
ບອກເຈົ້າພະນັກງານວ່າ 'ຈົ່ງເອີ້ນພວກຄົນງານມາ ແລ້ວໃຫ້ຄ່າຈ້າງແກ່ເຂົາຕັ້ງແຕ່ຜູ້ທຳງານສຸດ
ທ້າຍຈົນເຖິງຜູ້ມາກ່ອນ'. 9ເມື່ອພວກທີ່ເຂົ້າການແຕ່ສິບເອັດໂມງນັ້ນໄດ້ມາແລ້ວ ເຂົາກໍໄດ້ຮັບຄົນ
ລະໜຶ່ງເດນາຣິອົນ. 10ສ່ວນພວກທີ່ເຂົ້າການກ່ອນ ເມື່ອມາແລ້ວກໍນຶກວ່າຄົງຈະໄດ້ຮັບຫລາຍ
ກວ່ານັ້ນ ແຕ່ກໍໄດ້ຮັບຄົນລະໜຶ່ງເດນາຣິອົນເໝືອນກັນ. 11ເມື່ອໄດ້ຮັບເງິນແລ້ວເຂົາກໍຈົ່ມຕໍ່ພໍ່
ເຮືອນ. 12ວ່າ 'ພວກທີ່ເຂົ້າການສຸດທ້າຍໄດ້ເຮັດວຽກແຕ່ຊົ່ວໂມງດຽວ ແລະທ່ານໄດ້ໃຫ້ເຂົາທໍ່ກັນ
ກັບພວກຂ້ານ້ອຍ ທີ່ອົດທຳງານໜັກຕາກແດດຮ້ອນຕະຫລອດວັນ'. 13ເພິ່ນຈຶ່ງຕອບຜູ້ໜຶ່ງໃນໝູ່
ນັ້ນວ່າ 'ສະຫາຍເອີຍ, ຂ້ອຍບໍ່ໄດ້ເຮັດຜິດຕໍ່ເຈົ້າດອກ ເຈົ້າໄດ້ຕົກລົງກັນແລ້ວກັບຂ້ອຍວັນລະ
ໜຶ່ງເດນາຣິອົນ ບໍ່ແມ່ນຫລື. 14ສ່ວນທີ່ຕົກເປັນຂອງເຈົ້າຈົ່ງເອົາໄປເສຍ ຂ້ອຍພໍໃຈຈະໃຫ້ຄົນທີ່
ເຂົ້າການສຸດທ້າຍນີ້ທໍ່ກັນກັບເຈົ້າ. 15ຂ້ອຍມີສິດທີ່ຈະໃຊ້ເງິນຄຳຂອງຂ້ອຍຕາມໃຈຂອງຂ້ອຍ ບໍ່
ຄວນຫລື ເປັນຫຍັງເຈົ້າອິດສາເມື່ອເຫັນຂ້ອຍໃຈດີ'.[ຂ] 16ຢ່າງນັ້ນແຫລະຜູ້ທີ່ເປັນປາຍຈະກັບ
ເປັນຕົ້ນ ແລະຜູ້ເປັນຕົ້ນຈະກັບເປັນປາຍ."

## ຊົງທຳນວາຍເຖິງມໍລະນະພາບຂອງພຣະອົງເປັນຄັ້ງທີ່ສາມ

*(ມຣກ 10:32-34; ລກ 18:31-34)*

17ເມື່ອພຣະເຢຊູກຳລັງສະເດັດຂຶ້ນເມືອງກຸງເຢຣູຊາເລັມ ກໍຊົງພາພວກສາວົກສິບສອງຄົນໄປ
ເປັນໝູ່ຕ່າງຫາກ ຕາມທາງນັ້ນພຣະອົງຊົງບອກເຂົາວ່າ. 18"ເບິ່ງແມ, ພວກເຮົາກຳລັງຂຶ້ນເມືອ
ກຸງເຢຣູຊາເລັມ ແລະເຂົາຈະມອບບຸດມະນຸດໄວ້ກັບພວກປະໂລຫິດຕົນໃຫຍ່ແລະພວກນັກທຳ
ພວກເຫລົ່ານີ້ຈະລົງໂທດປະຫານຊີວິດເພິ່ນ. 19ແລ້ວຈະມອບໄວ້ກັບຄົນຕ່າງຊາດ ໃຫ້ເຍາະເຍີ້ຍ
ຂ້ຽນຕີແລະຕອກຕິດແຂນໄວ້ທີ່ໄມ້ກາງແຂນ ແລ້ວໃນວັນຖ້ວນສາມເພິ່ນຈະຖືກຊົງບັນດານໃຫ້
ເປັນຄືນມາໃໝ່."

## ຄຳທູນຂໍຕຳແໜ່ງຂອງມານດາ ຢາໂກໂບແລະໂຢຮັນ

*(ມຣກ 10:35-45)*

20ຂະນະນັ້ນມານດາຂອງລູກຊາຍເຊເບດາຍພາລູກທັງສອງຂອງຕົນມາຫາພຣະອົງຂາບໄຫວ້
ທູນຂໍສິ່ງໜຶ່ງຈາກພຣະອົງ. 21ພຣະອົງຈຶ່ງຊົງຖາມນາງວ່າ, "ນາງປາດຖະໜາສິ່ງໃດ" ນາງທູນ
ຕອບວ່າ, "ຂໍທ່ານຮັບສັ່ງໃຫ້ລູກຊາຍຂອງຂ້ານ້ອຍສອງຄົນນີ້ນັ່ງໃນອານາຈັກຂອງທ່ານ ເບື້ອງ
ຂວາຜູ້ໜຶ່ງ ເບື້ອງຊ້າຍຜູ້ໜຶ່ງ." 22ພຣະເຢຊູຊົງຕອບວ່າ, "ທີ່ພວກທ່ານຂໍນັ້ນພວກທ່ານບໍ່ເຂົ້າໃຈ

---

[ກ]ສະໄໝປະຈຸບັນນີ້ກໍຄືເວລາທ່ຽງຄືນ ເກົ້າໂມງກໍຄືບ່າຍສາມໂມງ ແລະ ສິບເອັດໂມງກໍຄື ຫ້າໂມງແລງ
[ຂ]ຫລືວ່າ "ຕາເຈົ້າຊົ່ວ ເມື່ອເຫັນຂ້ອຍໃຈດີຫລື."

ຈອກທີ່ເຮົາຈວນຈະດື່ມນັ້ນທ່ານຈະດື່ມໄດ້ຫລື” ເຂົາທູນຕອບວ່າ, ‘ໄດ້ຢູ່ຂ້ານ້ອຍ.” [23]ພຣະອົງ
ຊົງກ່າວກັບເຂົາວ່າ, “ພວກທ່ານຈະດື່ມຈອກຂອງເຮົາກໍຈິງຢູ່ ແຕ່ທີ່ຈະນັ່ງເບື້ອງຂວາແລະເບື້ອງ
ຊ້າຍຂອງເຮົານັ້ນ ບໍ່ແມ່ນໜ້າທີ່ຂອງເຮົາຈະຈັດໃຫ້ ແຕ່ພຣະບິດາຂອງເຮົາຊົງຈັດແຈງໄວ້ສຳ-
ລັບຜູ້ໃດກໍເປັນຂອງຜູ້ນັ້ນ.”

[24]ເມື່ອພວກສາວົກສິບຄົນໄດ້ຍິນດັ່ງນັ້ນແລ້ວ ກໍມີຄວາມເຄືອງໃຈເພາະອ້າຍນ້ອງສອງຄົນ
ນັ້ນ. [25]ພຣະເຢຊູຊົງເອີ້ນເຂົາມາແລ້ວກ່າວວ່າ, “ພວກທ່ານຮູ້ຢູ່ວ່າພວກຜູ້ຄຸ້ມຄອງຄົນຕ່າງຊາດກໍ
ບັງຄັບບັນຊາເຂົາ ແລະພວກຜູ້ໃຫຍ່ກໍໃຊ້ອຳນາດເໜືອເຂົາ. [26]ແຕ່ໃນລະຫວ່າງພວກທ່ານບໍ່ເປັນ
ຢ່າງນັ້ນ ຖ້າຜູ້ໃດຢາກເກີດເປັນໃຫຍ່ໃນພວກທ່ານ ຜູ້ນັ້ນຈະຕ້ອງເປັນຜູ້ຮັບໃຊ້ທ່ານທັງຫລາຍ.
[27]ແລະຖ້າຜູ້ໃດຢາກເປັນເອກເປັນຕົ້ນໃນພວກທ່ານ ຜູ້ນັ້ນຈະຕ້ອງເປັນຂ້ອຍໃຊ້ຂອງພວກທ່ານ.
[28]ເໝືອນຢ່າງບຸດມະນຸດບໍ່ໄດ້ມາເພື່ອໃຫ້ຄົນອື່ນບົວລະບັດຕົນ ແຕ່ໄດ້ມາເພື່ອຈະບົວລະບັດເຂົາ
ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນຫລາຍ.”

## ຊົງໂຜດສອງຄົນຕາບອດ

*(ມຣກ 10:46-52; ລກ 18:35-43)*

[29]ເມື່ອພຣະອົງກຳລັງສະເດັດພ້ອມດ້ວຍພວກສາວົກອອກໄປຈາກເມືອງເຢຣິໂກ ມີປະຊາຊົນ
ຈຳນວນຫລາຍໄດ້ຕາມພຣະອົງໄປ [30]ແລະເບິ່ງແມ, ມີຄົນຕາບອດສອງຄົນນັ່ງຢູ່ແຄມທາງ ເມື່ອ
ໄດ້ຍິນວ່າພຣະເຢຊູສະເດັດກາຍມາເຂົາຈຶ່ງຮ້ອງຂຶ້ນວ່າ “ທ່ານຜູ້ເປັນບຸດດາວິດເອີຍ, ຂໍຈົ່ງເມດ
ຕາພວກຂ້ານ້ອຍແດ່ທ້ອນ.” [31]ຝ່າຍປະຊາຊົນກໍຫ້າມເຂົາໃຫ້ມິດຢູ່ ແຕ່ເຂົາແຮ່ງຊ້ຳຮ້ອງດັງຂຶ້ນ
ວ່າ, “ທ່ານຜູ້ເປັນບຸດດາວິດເອີຍ, ຂໍຈົ່ງເມດຕາພວກຂ້ານ້ອຍແດ່ທ້ອນ.” [32]ພຣະເຢຊູຊົງຢຸດຢູ່
ແລະເອີ້ນເຂົາມາແລ້ວຊົງຖາມເຂົາວ່າ, “ພວກເຈົ້າຢາກໃຫ້ເຮົາເຮັດຫຍັງເພື່ອເຈົ້າ.” [33]ເຂົາຈຶ່ງທູນ
ຕອບວ່າ, “ທ່ານເອີຍ, ຂໍໂຜດເຮັດໃຫ້ຕາຂອງພວກຂ້ານ້ອຍມືນເຫັນຮຸ່ງແດ່ທ້ອນ.” [34]ພຣະເຢຊູ
ຊົງມີພຣະໄທຄຶດສົງສານ ຈຶ່ງຊົງບາຍຕາຂອງເຂົາ ໃນທັນໃດນັ້ນເຂົາກໍເຫັນຮຸ່ງ ຈຶ່ງໄດ້ຕິດຕາມ
ພຣະອົງໄປ.

# ບົດທີ 21

## ສະເດັດເຂົ້າກຸງເຢຣູຊາເລັມຢ່າງຜູ້ມີໄຊ

*(ມຣກ 11:1-11; ລກ 9:28-40; ຢຮ 12:12-19)*

[1]ເມື່ອພຣະອົງສະເດັດພ້ອມດ້ວຍພວກສາວົກໃກ້ກຸງເຢຣູຊາເລັມ ເຖິງບ້ານເບັດຟາເຄທີ່ພູ
ໝາກກອກເທດ ພຣະເຢຊູໄດ້ຊົງໃຊ້ສາວົກສອງຄົນໄປ, [2]ໂດຍຊົງສັ່ງເຂົາວ່າ, “ຈົ່ງເຂົ້າໄປໃນ
ບ້ານທີ່ຢູ່ຕໍ່ໜ້າທ່ານ ແລະບັດນັ້ນທ່ານຈະພົບລໍແມ່ໂຕໜຶ່ງຜູກຢູ່ກັບລູກມັນ ຈົ່ງແກ້ຈູງມາໃຫ້ເຮົາ.
[3]ຖ້າມີໃຜເວົ້າອັນໃດແກ່ທ່ານຈົ່ງຕອບວ່າ ‘ນາຍຕ້ອງການ’[ກ] ແລ້ວເພິ່ນຈະປ່ອຍໃຫ້ມາໂລດ.”
[4]ເຫດການນີ້ເກີດຂຶ້ນເພື່ອຈະສຳເລັດຕາມທີ່ຊົງກ່າວໄວ້ໂດຍຜູ້ປະກາດພຣະທຳວ່າ,

[5] “ຈົ່ງບອກແກ່ລູກສາວຂອງເມືອງຊີໂອນວ່າ

---

[ກ]ຫລືວ່າ “ນາຍຂອງເຮົາຕ້ອງການມັນ”

‘ເບິ່ງແມ, ກະສັດຂອງທ່ານສະເດັດມາຫາທ່ານ
ໂດຍພຣະໄທອ່ອນສຸພາບ
ປະທັບເທິງຫລັງລໍ ຄືລໍນ້ອຍລູກສັດໃຊ້ໂຕໜຶ່ງ’.”
[6]ສາວົກສອງຄົນນັ້ນກໍໄປເຮັດຕາມທີ່ ພຣະເຢຊູ ຊົງສັ່ງ, [7]ຈຶ່ງຈູງລໍແມ່ກັບລູກມັນມາ ແລະເອົາ
ເສື້ອຜ້າຂອງຕົນຢູ່ເທິງຫລັງມັນ ແລ້ວພຣະອົງໄດ້ຊົງຂຶ້ນປະທັບ. [8]ແລະປະຊາຊົນສ່ວນຫລາຍ
ໄດ້ເອົາເສື້ອຜ້າຂອງຕົນປູຕາມໜົນທາງ ບາງຄົນກໍຕັດພືດໄມ້ມາປູຕາມທາງ. [9]ຝ່າຍຝູງຄົນທີ່ຍ່າງ
ໄປກ່ອນກັບຜູ້ທີ່ມາຕາມຫລັງໄດ້ໂຫ່ຮ້ອງວ່າ, “ໂຮຊັນນາແກ່ລາຊະບຸດຂອງ ດາວິດ ຂໍໃຫ້ທ່ານຜູ້
ທີ່ສະເດັດມາໃນພຣະນາມຂອງອົງ ພຣະຜູ້ເປັນເຈົ້າ ຈົ່ງຊົງພຣະຈະເລີນ ໂຮຊັນນາ ໃນທີ່ສູງສຸດ.”
[10]ເມື່ອພຣະອົງສະເດັດເຂົ້າໄປໃນກຸງ ເຢຣູຊາເລັມ ແລ້ວ ປະຊາຊົນທົ່ວທັງກຸງກໍພາກັນແຕກຕື່ນ
ຖາມກັນວ່າ, “ຄົນນີ້ແມ່ນຜູ້ໃດ”. [11]ຝູງຊົນກໍຕອບວ່າ, “ນີ້ຄື ເຢຊູ ຜູ້ປະກາດພຣະທຳ ຊຶ່ງມາຈາກ
ນາຊາເຣັດ ແຂວງ ຄາລີເລ.”

## ຊົງຊຳລະພຣະວິຫານ

*(ມຣກ 11:15-19; ລກ 19:45-48; ຢຮ 2:13-22)*

[12]ເມື່ອນັ້ນ ພຣະເຢຊູ ໄດ້ສະເດັດເຂົ້າໄປໃນບໍລິເວນພຣະວິຫານ ຊົງຂັບໄລ່ບັນດາຜູ້ຊື້ຂາຍໃນ
ບໍລິເວນພຣະວິຫານນັ້ນອອກເສຍ ແລະຂວ້ຳໂຕະຜູ້ແລກເງິນກັບທັງບ່ອນນັ່ງຂອງຜູ້ຂາຍນົກເຂົາ
ເສຍ. [13]ແລ້ວພຣະອົງຊົງບອກເຂົາວ່າ, “ມີຄຳຂຽນໄວ້ໃນພຣະຄຳພີວ່າ ‘ວິຫານຂອງເຮົາ ເຂົາ
ຈະເອີ້ນວ່າເປັນສະຖານທີ່ໄຫວ້ວອນ’ ແຕ່ຝ່າຍພວກເຈົ້າໄດ້ເຮັດໃຫ້ເປັນ ‘ຖ້ຳຂອງໂຈນ’.”
[14]ພວກຄົນຕາບອດ ແລະຄົນຂາເສັ້ງກໍພາກັນມາຫາພຣະອົງໃນບໍລິເວນພຣະວິຫານ ພຣະອົງ
ໄດ້ຊົງໂຜດໃຫ້ເຂົາດີໝົດ. [15]ແຕ່ເມື່ອພວກປະໂລຫິດຕົນໃຫຍ່ແລະພວກນັກທຳໄດ້ເຫັນການອັດ-
ສະຈັນທີ່ພຣະອົງຊົງເຮັດນັ້ນ ທັງໄດ້ຍິນພວກເດັກນ້ອຍຮ້ອງຂຶ້ນໃນບໍລິເວນພຣະວິຫານວ່າ, “ໂຮ
ຊັນນາແກ່ລາຊະບຸດຂອງ ດາວິດ” ເຂົາກໍພາກັນເຄືອງໃຈ. [16]ເຂົາຈຶ່ງທູນຖາມພຣະອົງວ່າ, “ເຈົ້າ
ບໍ່ໄດ້ຍິນຄຳທີ່ເຂົາຮ້ອງຢູ່ຫລື” ພຣະເຢຊູ ຊົງຕອບວ່າ, “ໄດ້ຍິນແລ້ວ ພວກເຈົ້າບໍ່ໄດ້ອ່ານຈັກເທື່ອ
ຫລືຄຳທີ່ວ່າ, ‘ພຣະອົງຊົງຈັດໃຫ້ຄຳສັນລະເສີນອັນແທ້ຈິງອອກມາຈາກປາກຂອງເດັກນ້ອຍອ່ອນ
ແລະຜູ້ທີ່ຍັງກິນນົມຢູ່’.” [17]ເມື່ອພຣະອົງຊົງລະຈາກເຂົາແລ້ວ ກໍສະເດັດອອກຈາກກຸງໄປປະທັບ
ຢູ່ບ້ານ ເບັດທານີ.

## ຊົງປ້ອຍຕົ້ນເດື່ອເທດ

*(ມຣກ 11:12-14, 20-26)*

[18]ຄັນຕອນເຊົ້າຂະນະທີ່ພຣະອົງສະເດັດຄືນໄປຍັງກຸງ ພຣະອົງຊົງຫິວອາຫານ. [19]ເມື່ອທອດ
ພຣະເນດເຫັນຕົ້ນເດື່ອເທດຕົ້ນໜຶ່ງຢູ່ແຄມທາງ ພຣະອົງກໍສະເດັດເຂົ້າໄປໃກ້ ເມື່ອຊົງເຫັນບໍ່ມີ
ໝາກ ມີແຕ່ໃບເທົ່ານັ້ນ ພຣະອົງຈຶ່ງຊົງກ່າວແກ່ຕົ້ນນັ້ນວ່າ, “ມຶງຢ່າໄດ້ເກີດໝາກຕໍ່ໄປຈັກເທື່ອ”
ໃນທັນໃດນັ້ນຕົ້ນເດື່ອກໍຫ່ຽວແຫ້ງລົງ. [20]ເມື່ອພວກສາວົກເຫັນດັ່ງນັ້ນກໍປະຫລາດໃຈ ເວົ້າກັນວ່າ,
“ເປັນຢ່າງໃດໜໍ ຕົ້ນເດື່ອນັ້ນຈຶ່ງຫ່ຽວແຫ້ງໄປໃນທັນທີ.” [21]ພຣະເຢຊູ ຊົງກ່າວກັບເຂົາວ່າ, “ເຮົາ
ບອກພວກທ່ານຕາມຄວາມຈິງວ່າ ຖ້າພວກທ່ານຫາກມີຄວາມເຊື່ອແລະບໍ່ສົງໄສ ທ່ານຈະເຮັດ

ໄດ້ຢ່າງທີ່ເຮົາໄດ້ເຮັດແກ່ຕົ້ນເດື່ອນີ້ ແລະບໍ່ພຽງເທົ່ານັ້ນ ແຕ່ວ່າທ່ານຈະບອກພູນີ້ວ່າ ຈົ່ງຍ້າຍໄປ
ຕົກລົງນໍ້າທະເລເສຍ ກໍຈະເປັນໄປດັ່ງນັ້ນ. [22]ສິ່ງສາລະພັດທີ່ພວກທ່ານທູນຂໍໃນການອ້ອນວອນ
ຖ້າມີຄວາມເຊື່ອທ່ານກໍຈະໄດ້ສິ່ງນັ້ນ."

## ບັນຫາເລື່ອງສິດອຳນາດຂອງພຣະເຢຊູ

*(ມຣກ 11:27-33; ລກ 20:1-8)*

[23]ເມື່ອພຣະອົງສະເດັດເຂົ້າໄປໃນບໍລິເວນພຣະວິຫານ ໃນເວລາທີ່ຊົງສັ່ງສອນຢູ່ນັ້ນພວກປະ-
ໂລຫິດຕົນໃຫຍ່ແລະພວກເຖົ້າແກ່ແຫ່ງພົນລະເມືອງໄດ້ມາທູນຖາມພຣະອົງວ່າ "ເຈົ້າມີສິດອັນໃດ
ຈຶ່ງໄດ້ເຮັດການເຫລົ່ານີ້ ໃຜໃຫ້ສິດນີ້ແກ່ເຈົ້າ." [24]ພຣະເຢຊູຊົງຕອບເຂົາວ່າ, "ຝ່າຍເຮົາຈະຖາມ
ພວກທ່ານຈັກຂໍ້ໜຶ່ງເໝືອນກັນ ຖ້າທ່ານຕອບໄດ້ຝ່າຍເຮົາຈະບອກພວກທ່ານວ່າ ເຮົາເຮັດການນີ້
ດ້ວຍສິດອັນໃດ. [25]ຄືບັບຕິສະມາຂອງໂຢຮັນນັ້ນມາຈາກໃສ ມາຈາກສະຫວັນຫລືຈາກມະນຸດ"
ເຂົາໄດ້ປຶກສາກັນວ່າ, "ຖ້າເຮົາຈະຕອບວ່າ 'ມາຈາກສະຫວັນ' ມັນຄົງຈະຖາມເຮົາວ່າ 'ດ້ວຍ
ເຫດໃດພວກທ່ານຈຶ່ງບໍ່ເຊື່ອໂຢຮັນ.' [26]ແຕ່ຖ້າເຮົາຈະວ່າ 'ມາຈາກມະນຸດ' ກໍຢ້ານປະຊາຊົນ
ເພາະປະຊາຊົນທັງປວງຖືວ່າໂຢຮັນເປັນຜູ້ປະກາດພຣະທຳ." [27]ເຂົາຈຶ່ງທູນຕອບພຣະເຢຊູວ່າ,
"ພວກເຮົາບໍ່ຮູ້" ພຣະອົງຈຶ່ງຊົງບອກເຂົາວ່າ, "ຝ່າຍເຮົາຈະບໍ່ບອກພວກທ່ານເໝືອນກັນວ່າ ເຮົາ
ເຮັດການນີ້ດ້ວຍສິດອັນໃດ."

## ຄຳອຸປະມາເລື່ອງລູກຊາຍສອງຄົນ

[28]"ແຕ່ທ່ານທັງຫລາຍຄຶດເຫັນຢ່າງໃດ ຜູ້ໜຶ່ງມີລູກຊາຍສອງຄົນ ພໍ່ໄປຫາລູກກົກບອກວ່າ
'ລູກເອີຍ, ຈົ່ງໄປເຮັດວຽກໃນສວນອະງຸ່ນມື້ນີ້ເນີ.' [29]ລູກຜູ້ນັ້ນຕອບວ່າ 'ບໍ່ໄປ' ພາຍລຸນມາໄດ້
ປ່ຽນໃຈແລ້ວກໍໄປ. [30]ພໍ່ຈຶ່ງໄປຫາລູກຜູ້ທີ່ສອງເວົ້າຢ່າງດຽວກັນ ລູກຜູ້ນີ້ຕອບວ່າ 'ຂ້ານ້ອຍຈະ
ໄປ' ແຕ່ບໍ່ໄປ. [31]ໃນລູກຊາຍສອງຄົນນີ້ແມ່ນຜູ້ໃດເຮັດຕາມໃຈຂອງພໍ່" ເຂົາທູນຕອບວ່າ, "ແມ່ນ
ລູກກົກນັ້ນ" ພຣະເຢຊູຊົງກ່າວກັບເຂົາວ່າ, "ເຮົາບອກພວກທ່ານຕາມຄວາມຈິງວ່າ ພວກເກັບ
ພາສີແລະຍິງແມ່ຈ້າງກໍກຳລັງເຂົ້າໃນລາຊະແຜ່ນດິນຂອງພຣະເຈົ້າກ່ອນພວກທ່ານ. [32]ເພາະວ່າ
ໂຢຮັນໄດ້ມາຫາພວກທ່ານສອນທາງສິນທຳ ແຕ່ພວກທ່ານບໍ່ໄດ້ເຊື່ອ ສ່ວນພວກເກັບພາສີແລະ
ຍິງແມ່ຈ້າງໄດ້ເຊື່ອເພິ່ນ ຝ່າຍພວກທ່ານ, ເຖິງແມ່ນໄດ້ເຫັນດັ່ງນັ້ນແລ້ວ ພາຍຫລັງກໍບໍ່ໄດ້ຫລົບ
ໃຈເຊື່ອເພິ່ນ."

## ຄຳອຸປະມາເລື່ອງສວນອະງຸ່ນແລະຄົນເຊົ່າ

*(ມຣກ 11:1-12; ລກ 20:9-19)*

[33]"ຈົ່ງຟັງຄຳອຸປະມາເລື່ອງໜຶ່ງອີກ ຄືມີພໍ່ເຮືອນຜູ້ໜຶ່ງໄດ້ເຮັດສວນອະງຸ່ນ ແລ້ວອ້ອມຮົ້ວໄວ້
ເພິ່ນໄດ້ສະກັດອ່າງຢຽບໝາກອະງຸ່ນເອົານໍ້າ ແລະສ້າງຫໍເຝົ້າໃຫ້ຊາວສວນເຊົ່າ ແລ້ວຕົນກໍອອກ
ໄປຕ່າງປະເທດ. [34]ຄັນເຖິງລະດູໝາກອະງຸ່ນເພິ່ນຈຶ່ງໃຊ້ຂ້ອຍໃຊ້ແຫ່ງຕົນມາຫາພວກເຊົ່າສວນ
ນັ້ນ ເພື່ອຈະຮັບຜົນຂອງຕົນ. [35]ແຕ່ຝ່າຍຄົນເຊົ່າສວນນັ້ນໄດ້ຈັບຂ້ອຍໃຊ້ຂອງເພິ່ນ ຂ້ຽນຕີຜູ້
ໜຶ່ງ, ຂ້າເສຍຜູ້ໜຶ່ງ, ແລະເອົາຫີນຄວ່າງໃສ່ຜູ້ໜຶ່ງ. [36]ເຈົ້າຂອງສວນໄດ້ໃຊ້ຂ້ອຍໃຊ້ອີກຫລາຍ
ກວ່າເທື່ອກ່ອນ ແຕ່ຊາວສວນໄດ້ເຮັດແກ່ເຂົາຢ່າງດຽວກັນ. [37]ພາຍຫລັງນັ້ນເຈົ້າຂອງສວນໄດ້

ໃຊ້ລູກຊາຍຂອງຕົນມາ ໂດຍຄິດວ່າ 'ເຂົາຄົງຈະນັບຖືລູກຂອງກູ,' [38]ແຕ່ເມື່ອພວກເຊົ່າສວນ
ເຫັນລູກຊາຍຂອງເພິ່ນມາກໍເວົ້າກັນວ່າ 'ຜູ້ນີ້ແຫລະ, ເປັນເຈົ້າມໍລະດົກພວກເຮົາຈົ່ງຂ້າມັນເສຍ
ແລ້ວຍຶດເອົາມໍລະດົກຂອງມັນ.' [39]ເຂົາຈຶ່ງພາກັນຈັບເອົາລູກນັ້ນຖິ້ມອອກນອກສວນແລ້ວຂ້າ
ເສຍ. [40]ເຫດສັນນັ້ນເມື່ອເຈົ້າຂອງສວນມາ ທ່ານຈະເຮັດຢ່າງໃດແກ່ຄົນເຊົ່າສວນເຫລົ່ານັ້ນ."
[41]ເຂົາທູນຕອບພຣະອົງວ່າ, "ທ່ານຈະລົງໂທດຢ່າງຮ້າຍແຮງໃສ່ຄົນຊົ່ວເຫລົ່ານັ້ນດ້ວຍຂ້າເຂົາ
ເສຍ ແລ້ວຈະເອົາສວນອະງຸ່ນນັ້ນໃຫ້ຜູ້ອື່ນເຊົ່າ ຊຶ່ງຈະນຳຜົນມາສົ່ງໃຫ້ເພິ່ນຕາມລະດູຕໍ່ໄປ."

## ຫີນເສົາເອກ

[42]ພຣະເຢຊູຊົງກ່າວກັບເຂົາວ່າ, "ພວກທ່ານຍັງບໍ່ໄດ້ອ່ານໃນພຣະຄຳພີຫລືທີ່ວ່າ,

ຫີນທີ່ນາຍຊ່າງໄດ້ຖອກຖິ້ມເສຍ
  ຫີນນັ້ນແຫລະ, ໄດ້ກາຍເປັນຫີນເສົາເອກແລ້ວ
ການນີ້ເປັນມາຈາກອົງພຣະຜູ້ເປັນເຈົ້າ
  ເປັນການປະຫລາດແກ່ຕາຂອງເຮົາ."

[43]ເຫດສັນນັ້ນເຮົາບອກພວກທ່ານວ່າ ລາຊະແຜ່ນດິນຂອງພຣະເຈົ້າຈະຊົງຍົກເອົາໄປຈາກ
ພວກທ່ານ ແລ້ວຊົງປະທານແກ່ຊົນຊາດໜຶ່ງທີ່ຈະໃຫ້ຜົນຈະເລີນສົມກັບແຜ່ນດິນນັ້ນ. [44](ຜູ້ໃດ
ລົ້ມທັບຫີນນີ້ ຜູ້ນັ້ນຈະຕ້ອງແຕກຫັກໄປ ແຕ່ຫີນນັ້ນຈະຕົກທັບຜູ້ໃດ ຜູ້ນັ້ນຈະແຫລກມຸ່ນໄປ.)"
[45]ເມື່ອພວກປະໂລຫິດຕົນໃຫຍ່ກັບພວກຟາຣີຊາຍ ໄດ້ຍິນຄຳອຸປະມາຂອງພຣະອົງແລ້ວ ເຂົາກໍ
ຮູ້ວ່າພຣະອົງຊົງກ່າວເຖິງເຂົາ. [46]ແມ່ນວ່າເຂົາພະຍາຍາມຈະຈັບພຣະອົງແຕ່ກໍຢ້ານປະຊາຊົນ
ເພາະປະຊາຊົນຖືວ່າພຣະອົງເປັນຜູ້ປະກາດພຣະທຳ.

# ບົດທີ 22

## ຄຳອຸປະມາເລື່ອງພິທີອະພິເສກ

*(ລກ 14:15-24)*

[1]ພຣະເຢຊູຊົງກ່າວກັບເຂົາເປັນຄຳອຸປະມາອີກວ່າ, [2]"ລາຊະອານາຈັກສະຫວັນປຽບເໝືອນ
ກະສັດອົງໜຶ່ງໄດ້ຊົງຈັດການລ້ຽງ ເນື່ອງໃນພິທີອະພິເສກມະເຫສີໃຫ້ລາຊະບຸດຂອງຕົນ.
[3]ພຣະອົງຊົງໃຊ້ພວກຂ້າໃຊ້ໄປເອີ້ນຜູ້ທີ່ຮັບເຊີນໃນງານນີ້ ແຕ່ເຂົາບໍ່ຢາກມາ. [4]ພຣະອົງຈຶ່ງຊົງໃຊ້
ຂ້າໃຊ້ໄປຕື່ມອີກ ສັ່ງເຂົາວ່າ 'ຈົ່ງບອກພວກຮັບເຊີນນັ້ນວ່າ, "ເບິ່ງແມ, ເຮົາໄດ້ຈັດງານລ້ຽງໄວ້
ແລ້ວ ງົວແລະສັດອ້ວນພີກໍໄດ້ຂ້າໄວ້ແລ້ວ ສິ່ງສາລະພັດກໍຕຽມໄວ້ພ້ອມແລ້ວ ຈົ່ງມາໃນງານ
ອະພິເສກນັ້ນເທີນ" [5]ແຕ່ເຂົາກໍເພີກເສີຍແລະໜີເສຍ ຜູ້ໜຶ່ງໄປໄຮ່ໄປນາ ແລະຜູ້ໜຶ່ງໄປຄ້າຂາຍ.
[6]ສ່ວນພວກອື່ນນັ້ນກໍຈັບພວກຂ້າໃຊ້ເຮັດການຫຍາບຊ້າແລ້ວຂ້າເຂົາເສຍ. [7]ກະສັດອົງນັ້ນກໍຊົງ
ພະພິໂລດ ຈຶ່ງຊົງຮັບສັ່ງໃຫ້ກອງທະຫານໄປປະຫານຊີວິດຄາຕະກອນເຫລົ່ານັ້ນ ແລະໃຫ້ເຜົາ
ບ້ານເຮືອນຂອງເຂົາເສຍ. [8]ແລ້ວພຣະອົງຈຶ່ງຊົງຮັບສັ່ງຂ້າໃຊ້ວ່າ, 'ງານສົມລົດກໍພ້ອມຢູ່ແລ້ວ
ແຕ່ຜູ້ຖືກເຊີນນັ້ນບໍ່ສົມກັບງານ. [9]ເຫດສັນນີ້ຈົ່ງອອກໄປທີ່ທາງຄົບ ເມື່ອພົບຄົນໃດກໍໃຫ້ເຊີນມາ
ໃນງານນີ້.' [10]ພວກຂ້າໃຊ້ນັ້ນຈຶ່ງອອກໄປຕາມຖະໜົນຫົນທາງ ພາຄົນທັງປວງທັງດີແລະຊົ່ວທີ່

ເຂົາໄດ້ພົບໃຫ້ເຂົ້າມາໃນງານນີ້ ຈົນຫ້ອງພິທີສົມລົດເຕັມດ້ວຍແຂກ. [11]"ແຕ່ເມື່ອກະສັດອົງນັ້ນ
ສະເດັດເຂົ້າມາທອດພຣະເນດແຂກ ກໍຊົງເຫັນຜູ້ໜຶ່ງຢູ່ທີ່ນັ້ນບໍ່ໄດ້ນຸ່ງເຄື່ອງສຳລັບງານ. [12]ພຣະ-
ອົງຊົງຖາມຜູ້ນັ້ນວ່າ 'ສະຫາຍເອີຍ, ເຫດໃດທ່ານຈຶ່ງອາດເຂົ້າມາທີ່ນີ້ໂດຍບໍ່ນຸ່ງເຄື່ອງສຳລັບງານ
ສົມລົດ' ສ່ວນຄົນນັ້ນກໍມິດຢູ່ປາກບໍ່ອອກ. [13]ກະສັດຈຶ່ງຊົງສັ່ງແກ່ພວກຂ້າໃຊ້ວ່າ 'ຈົ່ງມັດຕີນມັດ
ມືຄົນນີ້ເອົາໄປຖິ້ມເສຍບ່ອນມືດພາຍນອກ' ທີ່ນັ້ນມີການຮ້ອງໄຫ້ແລະຂົບແຂ້ວຢູ່. [14]ດ້ວຍວ່າຜູ້
ຮັບເຊີນກໍມີຫລາຍ ແຕ່ຜູ້ທີ່ຊົງເລືອກໄວ້ກໍມີໜ້ອຍ."

## ບັນຫາເລື່ອງການເສຍສ່ວຍ

*(ມຣກ 12:13-17; ລກ 20:20-26)*

[15]ເມື່ອນັ້ນພວກ ຟາຣີຊາຍ ໄປປຶກສາກັນ ເພື່ອຈະຈັບຜິດໃນຖ້ອຍຄຳຂອງພຣະອົງໃຫ້ໄດ້.
[16]ເຂົາຈຶ່ງໃຊ້ພວກສິດຂອງຕົນກັບພວກ ເຮໂຣດ ໄປທູນພຣະອົງວ່າ, "ອາຈານເອີຍ, ພວກຂ້າພະ-
ເຈົ້າຊາບຢູ່ວ່າທ່ານເປັນຜູ້ສັດຊື່ ໄດ້ສັ່ງສອນໃນທາງຂອງ ພຣະເຈົ້າ ຢ່າງສັດຊື່ໂດຍບໍ່ໄດ້ເອົາໃຈຜູ້
ໃດ ເພາະທ່ານບໍ່ເຫັນແກ່ໜ້າຜູ້ໃດ. [17]ເຫດສັນນັ້ນຂໍໂຜດໃຫ້ພວກຂ້າພະເຈົ້າຊາບແດ່ວ່າ ທ່ານ
ຄຶດເຫັນຢ່າງໃດ ການທີ່ເສຍສ່ວຍໃຫ້ແກ່ ກາຍຊາ ນັ້ນສົມຄວນ[ກ] ຫລືບໍ່."

[18]ຝ່າຍ ພຣະເຢຊູ ຊົງຊາບເຈດຕະນາຮ້າຍຂອງເຂົາ ຈຶ່ງຊົງກ່າວວ່າ, "ໂອ ຄົນໜ້າຊື່ໃຈຄົດ
ເອີຍ, ຈະມາທົດລອງເຮົາເຮັດຫຍັງ. [19]ຈົ່ງເອົາເງິນທີ່ຈະເສຍສ່ວຍນັ້ນມາໃຫ້ເຮົາເບິ່ງ" ເຂົາຈຶ່ງ
ເອົາເງິນໜຶ່ງເດນາລິອົນມາໃຫ້ພຣະອົງ. [20]ພຣະເຢຊູ ຈຶ່ງຊົງຖາມເຂົາວ່າ, "ຮູບແລະຄຳຈາລຶກນີ້
ເປັນຂອງໃຜ." [21]ເຂົາທູນວ່າ, "ເປັນຂອງ ກາຍຊາ" ແລ້ວພຣະອົງຊົງກ່າວກັບເຂົາວ່າ, "ເຫດ
ສັນນັ້ນສິ່ງທີ່ເປັນຂອງ ກາຍຊາ ຈົ່ງຄືນຖວາຍແກ່ ກາຍຊາ ແລະສິ່ງທີ່ເປັນຂອງ ພຣະເຈົ້າ ຈົ່ງ
ຄືນຖວາຍແກ່ ພຣະເຈົ້າ." [22]ເມື່ອເຂົາໄດ້ຍິນດັ່ງນີ້ກໍມີຄວາມປະຫລາດໃຈຈຶ່ງພາກັນໜີຈາກພຣະ-
ອົງໄປ.

## ບັນຫາເລື່ອງການຄືນມາຈາກຕາຍ

*(ມຣກ 12:18-27; ລກ 20:27-40)*

[23]ໃນວັນດຽວກັນນັ້ນມີພວກ ຊາດູກາຍ ມາຫາພຣະອົງ ພວກນີ້ເຄີຍເວົ້າວ່າ ບໍ່ມີການຄືນມາ
ຈາກຕາຍ. [24]ເຂົາທູນຖາມພຣະອົງວ່າ, "ອາຈານເອີຍ, ໂມເຊ ໄດ້ສັ່ງໄວ້ວ່າ 'ຖ້າຜູ້ໃດຕາຍໃນ
ເມື່ອຍັງບໍ່ມີລູກ ກໍໃຫ້ນ້ອງຊາຍຂອງຜູ້ນັ້ນເອົາເອື້ອຍໄພ້ໄວ້ເປັນພັນລະຍາ ເພື່ອສືບເຊື້ອສາຍ
ອ້າຍຂອງຕົນ.' [25]ໃນພວກເຮົາມີເຈັດຊາຍອ້າຍນ້ອງນຳກັນ ອ້າຍກົກເອົາເມຍແລ້ວໄດ້ຕາຍໄປ
ເມື່ອຍັງບໍ່ມີລູກ ກໍປະເມຍໄວ້ໃຫ້ແກ່ນ້ອງຊາຍ. [26]ສ່ວນນ້ອງຜູ້ຖ້ວນສອງແລະຖ້ວນສາມກໍຢ່າງ
ດຽວກັນ ຈົນເຖິງຜູ້ຖ້ວນເຈັດ. [27]ພາຍຫລັງເຂົາທັງເຈັດ ຍິງນັ້ນກໍຕາຍ. [28]ສັນນັ້ນໃນວັນຄືນມາ
ຈາກຕາຍ ຍິງນັ້ນຈະເປັນເມຍຂອງຜູ້ໃດໃນເຈັດຄົນນັ້ນ ດ້ວຍວ່ານາງໄດ້ເປັນເມຍຂອງຊາຍທັງ
ເຈັດຄົນແລ້ວ." [29]ພຣະເຢຊູ ຊົງຕອບເຂົາວ່າ, "ພວກທ່ານຫລົງຜິດແລ້ວ ເພາະບໍ່ຮູ້ຈັກພຣະຄຳພີ
ຫລືລິດເດດຂອງ ພຣະເຈົ້າ. [30]ເພາະເມື່ອມະນຸດເປັນຄືນມານັ້ນຈະບໍ່ມີການແຕ່ງງານ ຫລືຍົກໃຫ້
ເປັນຜົວເມຍກັນອີກ ແຕ່ເຂົາຈະເປັນເໝືອນເທວະດາໃນສະຫວັນ. [31]ແຕ່ເລື່ອງຄົນຕາຍເປັນຄືນ

[ກ]ໝາຍຄວາມວ່າ ຖືກຕ້ອງພຣະບັນຍັດ

ມານັ້ນ ທ່ານທັງຫລາຍຍັງບໍ່ໄດ້ອ່ານຫລືຊຶ່ງ ພຣະເຈົ້າ ໄດ້ຊົງກ່າວໄວ້ກັບພວກທ່ານວ່າ, 32‘ຝ່າຍ
ເຮົາເປັນ ພຣະເຈົ້າ ຂອງອັບລາຮາມ, ພຣະເຈົ້າ ຂອງຂອງ ອີຊາກ, ແລະ ພຣະເຈົ້າ ຂອງ ຢາໂຄບ’
ພຣະອົງບໍ່ໄດ້ຊົງ ເປັນ ພຣະເຈົ້າ ຂອງຄົນຕາຍ ແຕ່ຊົງ ເປັນ ພຣະເຈົ້າ ຂອງຄົນ ເປັນ.” 33ເມື່ອຄົນ
ທັງປວງໄດ້ຍິນດັ່ງນີ້ກໍປະລາດໃຈດ້ວຍຄຳສັ່ງສອນຂອງພຣະອົງ.

## ພຣະບັນຍັດຂໍ້ໃຫຍ່

*(ມຣກ 12:28-34; ລກ 10:25-28)*

34ຝ່າຍພວກ ຟາຣີຊາຍ ເມື່ອໄດ້ຍິນວ່າພຣະອົງຊົງ ເຮັດໃຫ້ພວກ ຊາດູກາຍ ມິດຢູ່ເຂົາຈຶ່ງປະຊຸມ
ກັນ. 35ໃນຈຳພວກເຂົາມີທຳບັນດິດຜູ້ໜຶ່ງທົດລອງຖາມພຣະອົງວ່າ, 36“ອາຈານເອີຍ, ໃນພຣະ-
ບັນຍັດຂໍ້ໃດເປັນຂໍ້ໃຫຍ່.” 37ພຣະເຢຊູ ຕອບວ່າ, “ຈົ່ງຮັກອົງ ພຣະຜູ້ເປັນເຈົ້າ ຂອງ ເຈົ້າດ້ວຍສຸດ
ໃຈ, ດ້ວຍສຸດຈິດ, ແລະດ້ວຍສຸດຄວາມຄຶດຂອງ ເຈົ້າ.’ 38ນັ້ນແຫລະ, ເປັນພຣະບັນຍັດຂໍ້ໃຫຍ່
ແລະຂໍ້ຕົ້ນ. 39ຂໍ້ທີສອງກໍເໝືອນກັນ ຄື ‘ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ.’ 40ພຣະບັນຍັດ
ແລະຖ້ອຍຄຳຂອງຜູ້ປະກາດພຣະທຳທັງໝົດ ກໍຂຶ້ນຢູ່ກັບພຣະບັນຍັດຂອງຂໍ້ນີ້.”

## ບັນຫາເລື່ອງບຸດດາວິດ

*(ມຣກ 12:35-38; ລກ 20:41-44)*

41ເມື່ອພວກ ຟາຣີຊາຍ ຍັງປະຊຸມກັນຢູ່ ພຣະເຢຊູ ຊົງຖາມເຂົາ, 42ວ່າ, “ພວກທ່ານຄຶດເຫັນ
ຢ່າງໃດດ້ວຍເລື່ອງ ພຣະຄຣິດ ເພິ່ນເປັນເຊື້ອສາຍຂອງຜູ້ໃດ” ເຂົາທູນຕອບວ່າ, “ເປັນເຊື້ອສາຍ
ຂອງ ດາວິດ.” 43ພຣະອົງຈຶ່ງຊົງຖາມເຂົາວ່າ, “ຖ້າຢ່າງນັ້ນເຫດສັນໃດ ດາວິດ ໂດຍເດດ ພຣະ-
ວິນຍານ ຈຶ່ງໄດ້ເອີ້ນພຣະອົງວ່າ ‘ອົງ ພຣະຜູ້ເປັນເຈົ້າ’ ດ້ວຍໄດ້ກ່າວວ່າ,

44 ‘ພຣະຜູ້ເປັນເຈົ້າ ໄດ້ຊົງບອກຕໍ່ອົງ ພຣະຜູ້ເປັນເຈົ້າ ຂອງຂ້າພຣະອົງວ່າ,
“ຈົ່ງນັ່ງເບື້ອງຂວາມືຂອງເຮົາ
ຈົນກວ່າເຮົາຈະປາບສັດຕູຂອງທ່ານໃຫ້ຢູ່ໃຕ້ຕີນຂອງທ່ານ”

45ເຫດສັນນີ້ຖ້າ ດາວິດ ເອີ້ນ ພຣະຄຣິດ ວ່າ ‘ພຣະຜູ້ເປັນເຈົ້າ’ ແລ້ວ ພຣະຄຣິດ ຈະເປັນ ເຊື້ອ-
ສາຍຂອງ ດາວິດ ໄດ້ຢ່າງໃດ.”
46ບໍ່ມີຜູ້ໃດອາດຈະຕອບພຣະອົງໄດ້ຈັກຄຳ ຕັ້ງແຕ່ວັນນັ້ນມາບໍ່ມີຜູ້ໃດກ້າຖາມພຣະອົງອີກ.

# ບົດທີ 23

## ຊົງປະນາມພວກນັກທຳແລະພວກຟາຣີຊາຍ

*(ມຣກ 12:38-40; ລກ 11:37-54; 20:45-47)*

1ເມື່ອນັ້ນ ພຣະເຢຊູ ຊົງກ່າວກັບປະຊາຊົນ ແລະພວກສາວົກຂອງພຣະອົງວ່າ, 2“ພວກນັກທຳ
ແລະພວກ ຟາຣີຊາຍ ເຄີຍນັ່ງບ່ອນນັ່ງຂອງ ໂມເຊ. 3ເຫດສັນນັ້ນທຸກສິ່ງທີ່ ເຂົາບອກພວກທ່ານ
ຈົ່ງ ເຮັດຕາມ ແຕ່ຢ່າໄດ້ເຮັດຕາມກິດຈະການຂອງ ເຂົາ ເພາະ ເຂົາບອກໄວ້ແຕ່ບໍ່ໄດ້ເຮັດຕາມ.
4ເຂົາມັດຂອງໜັກມາວາງໃສ່ບ່າມະນຸດ ສ່ວນເຂົາເອງ ແມ່ນແຕ່ນິ້ວມືດຽວກໍບໍ່ຍອມຈັບຍົກໄປ.

5ການເຮັດຂອງເຂົາກໍເພື່ອໃຫ້ມະນຸດເຫັນ ແອບບັນຈຸຂໍ້ພຣະທຳປະຈຳຕົວ[ກ] ເຂົາກໍເຮັດໃຫ້ໃຫຍ່
ແລະຍອຍເສື້ອຂອງເຂົາໆ ກໍໃຫ້ຍາວອອກໄປ. 6ເຂົາຊອບບ່ອນນັ່ງອັນມີກຽດໃນງານລ້ຽງຕ່າງໆ
ແລະໃນໂຮງທຳມະເທດສະໜາ. 7ເຂົາມັກໃຫ້ຄົນຄຳນັບໃນທີ່ປະຊຸມຊົນ ແລະມັກໃຫ້ມະນຸດເອີ້ນ
ເຂົາວ່າ ‘ອາຈານ’ 8ແຕ່ຝ່າຍພວກທ່ານ ຢ່າໃຫ້ໃຜເອີ້ນວ່າ ‘ອາຈານເຈົ້າຂ້າ’ ເພາະວ່າພວກທ່ານ
ມີແຕ່ພຣະອາຈານຜູ້ດຽວ ແລະພວກທ່ານເປັນພີ່ນ້ອງກັນທັງໝົດ. 9ແລະຢ່າເອີ້ນຜູ້ໃດໃນໂລກວ່າ
‘ບິດາ’ ເພາະພວກທ່ານມີພຣະບິດາແຕ່ພຽງຜູ້ດຽວ ຄືຜູ້ທີ່ຊົງສະຖິດຢູ່ໃນສະຫວັນ. 10ຢ່າໃຫ້ຜູ້
ໃດເອີ້ນພວກທ່ານວ່າ ‘ນາຍ’ ເພາະວ່ານາຍຂອງພວກທ່ານມີແຕ່ຜູ້ດຽວ ຄືພຣະຄຣິດ. 11ຜູ້ໃດທີ່
ເປັນໃຫຍ່ທີ່ສຸດໃນພວກທ່ານ ຜູ້ນັ້ນຕ້ອງຮັບໃຊ້ໝູ່. 12ຜູ້ໃດຍົກຕົວຂຶ້ນ ຜູ້ນັ້ນຈະຖືກຖ່ອຍລົງ ຜູ້
ໃດຖ່ອມຕົວລົງ ຜູ້ນັ້ນຈະຖືກຍົກຂຶ້ນ.

13“ວິບັດແກ່ພວກນັກທຳແລະພວກຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ເພາະພວກເຈົ້າອັດປະຕູ
ລາຊະແຜນດິນສະຫວັນຕັນທາງມະນຸດ ດ້ວຍວ່າພວກເຈົ້າເອງກໍບໍ່ເຂົ້າໄປ ແລະເມື່ອຄົນອື່ນຈະ
ເຂົ້າໄປ ພວກເຈົ້າກໍບໍ່ໃຫ້ເຂົ້າໄປ. 14[ວິບັດແກ່ເຈົ້າພວກນັກທຳແລະພວກຟາຣີຊາຍ ຄົນໜ້າຊື່
ໃຈຄົດເອີຍ ດ້ວຍວ່າພວກເຈົ້າກືນກິນຄອບຄົວຂອງແມ່ໝ້າຍ ແລະແກ້ງໄຫວ້ວອນໃຫ້ຍືດຍາວ
ເພາະເຫດນັ້ນພວກເຈົ້າຈະໄດ້ຮັບໂທດຫລາຍຂຶ້ນ.]

15ວິບັດແກ່ເຈົ້າພວກນັກທຳແລະພວກຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ດ້ວຍວ່າພວກເຈົ້າທ່ຽວ
ໄປທາງນ້ຳແລະທາງບົກທົ່ວໄປ ເພື່ອຈະໃຫ້ແມ່ນແຕ່ຄົນດຽວເຂົ້າສາດສະໜາ ແຕ່ເມື່ອໄດ້ເຂົ້າ
ແລ້ວ ພວກເຈົ້າກໍເຮັດໃຫ້ຄົນນັ້ນສົມກັບນະລົກຫລາຍກວ່າເຈົ້າເອງເຖິງສອງທໍ່.

16“ວິບັດແກ່ເຈົ້າ, ນາຍທາງຕາບອດທີ່ສອນວ່າ ‘ຖ້າຜູ້ໃດຈະສາບານອ້າງໃສ່ພຣະວິຫານ ຄຳ
ສາບານນັ້ນກໍບໍ່ມີຂໍ້ຜູກມັດ ແຕ່ຖ້າຜູ້ໃດສາບານອ້າງໃສ່ທອງຄຳຂອງພຣະວິຫານ ຜູ້ນັ້ນຈະຕ້ອງ
ເຮັດຕາມຄຳທີ່ຕົນໄດ້ສາບານ.’ 17ໂອ ຄົນໂງ່ຕາບອດເອີຍ, ສິ່ງໃດຈະສຳຄັນກວ່າກັນ ທອງຄຳ
ຫລືພຣະວິຫານ ທີ່ເຮັດໃຫ້ທອງຄຳນັ້ນສັກສິດ. 18ແລະສອນວ່າ ‘ຖ້າຜູ້ໃດຈະສາບານອ້າງໃສ່
ແທນບູຊາ ຄຳສາບານນັ້ນກໍບໍ່ມີຂໍ້ຜູກມັດ ແຕ່ຖ້າຜູ້ໃດຈະສາບານໃສ່ເຄື່ອງຖວາຍເທິງແທນບູຊາ
ຜູ້ນັ້ນຈະຕ້ອງເຮັດຕາມຄຳທີ່ຕົນໄດ້ສາບານ.’ 19ພວກຄົນຕາບອດເອີຍ, ສິ່ງໃດຈະສຳຄັນກວ່າ
ກັນ ເຄື່ອງຖວາຍຫລືແທນບູຊາທີ່ເຮັດໃຫ້ເຄື່ອງຖວາຍນັ້ນສັກສິດ. 20ເຫດສັນນີ້ຜູ້ໃດຈະສາບານ
ອ້າງໃສ່ແທນບູຊາ ກໍສາບານອ້າງໃສ່ເຄື່ອງຖວາຍທັງປວງທີ່ຢູ່ເທິງແທນນັ້ນເໝືອນກັນ. 21ຖ້າຜູ້
ໃດຈະສາບານອ້າງໃສ່ພຣະວິຫານ ກໍອ້າງໃສ່ພຣະອົງຜູ້ຊົງສະຖິດຢູ່ໃນພຣະວິຫານນັ້ນເໝືອນ
ກັນ. 22ແລະຜູ້ໃດຈະສາບານອ້າງໃສ່ສະຫວັນກໍອ້າງໃສ່ພຣະທີ່ນັ່ງແລະອ້າງໃສ່ພຣະອົງຜູ້ປະທັບ
ເທິງພຣະທີ່ນັ່ງນັ້ນເໝືອນກັນ.

23“ວິບັດແກ່ເຈົ້າພວກນັກທຳແລະພວກຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ດ້ວຍວ່າພວກເຈົ້າ
ແບ່ງຜັກກ້ານກໍ່າ, ຜັກຊີ, ແລະຄູມິນເປັນສິບສ່ວນ ເອົາສ່ວນໜຶ່ງເປັນຂອງຖວາຍ ແຕ່ສ່ວນຂໍ້
ສຳຄັນຂອງພຣະບັນຍັດ ຄືຄວາມຍຸຕິທຳ, ຄວາມເມດຕາ, ຄວາມສັດຊື່ນັ້ນໄດ້ປະເສຍ ແມ່ນສິ່ງ
ເຫລົ່ານີ້ແຫລະ, ທີ່ພວກເຈົ້າຄວນໄດ້ປະຕິບັດຢູ່ໂດຍບໍ່ຕ້ອງປະຖິ້ມສິ່ງອື່ນນັ້ນ. 24ໂອ ພວກນາຍ

[ກ]ແມ່ນກັບນ້ອຍໆ ເຮັດດ້ວຍໜັງ ພາຍໃນມີຂໍ້ພິເສດຄັດເລືອກຈາກພຣະບັນຍັດ ກັບດັ່ງກ່າວຄົນຢິວເຄີຍຖື
ຕິດໜ້າຜາກກັບແຂນສອກໄວ້.

ທາງຕາບອດເອີຍ, ເຈົ້າຕອງແມງມີ່ອອກເສຍ ແຕ່ກືນໂອດໂອທັງໂຕ.
[25]"ວິບັດແກ່ເຈົ້າພວກນັກທຳແລະພວກຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ, ເຫດວ່າພວກເຈົ້າ
ເຄີຍລ້າງຖ້ວຍຊາມໃຫ້ສະອາດແຕ່ຂ້າງນອກ ແຕ່ຂ້າງໃນຖ້ວຍຊາມນັ້ນເຕັມໄປດ້ວຍການລູ່ຊິງ
ເອົາແລະການເຫັນແກ່ຕົວ. [26]ໂອ ຟາຣີຊາຍຕາບອດເອີຍ, ຈົ່ງຊຳລະຖ້ວຍຊາມຂ້າງໃນເສຍ
ກ່ອນ ເພື່ອຂ້າງນອກຈະສະອາດເໝືອນກັນ.
[27]"ວິບັດແກ່ເຈົ້າພວກນັກທຳແລະພວກຟາຣີຊາຍ ຄົດໜ້າຊື່ໃຈຄົດເອີຍ ດ້ວຍວ່າພວກເຈົ້າ
ເປັນເໝືອນອຸບໂມງຝັງສົບ ທາດ້ວຍປູນຂາວຂ້າງນອກເບິ່ງງົດງາມ ແຕ່ຂ້າງໃນເຕັມໄປດ້ວຍ
ກະດູກຄົນຕາຍແລະສາລະພັດຂີ້ດຽດ. [28]ພວກເຈົ້າກໍເປັນຢ່າງນັ້ນແຫລະ ພາຍນອກປະກົດຕໍ່
ມະນຸດວ່າເປັນຄົນສິນທຳ ແຕ່ພາຍໃນເຕັມໄປດ້ວຍການໜ້າຊື່ໃຈຄົດແລະການອະທຳ.
[29]ວິບັດແກ່ເຈົ້າພວກນັກທຳແລະພວກຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ດ້ວຍວ່າພວກເຈົ້າສ້າງ
ອຸບໂມງຂອງພວກປະກາດພຣະທຳ ແລະຕົກແຕ່ງທາດຂອງພວກຄົນສິນທຳໃຫ້ງົດງາມ. [30]ໂດຍ
ກ່າວວ່າ 'ຖ້າພວກເຮົາໄດ້ຢູ່ໃນສະໃໝບັນພະບຸລຸດຂອງເຮົານັ້ນກໍຈະບໍ່ມີສ່ວນກັບເຂົາໃນການ
ຂ້າ[ກ] ພວກຜູ້ປະກາດພຣະທຳນັ້ນ. [31]ດັ່ງນັ້ນພວກເຈົ້າຈຶ່ງເປັນພະຍານຕໍ່ສູ້ຕົນເອງວ່າເປັນລູກ
ຂອງຜູ້ທີ່ໄດ້ຂ້າພວກຜູ້ປະກາດພຣະທຳເຫລົ່ານັ້ນ. [32]ຝ່າຍເຈົ້າທັງຫລາຍ, ຈົ່ງເຮັດຕາມທີ່ບັນພະ-
ບຸລຸດໄດ້ເຮັດນັ້ນໃຫ້ຄົບຖ້ວນສາ. [33]ໂອ ພວກງູແນວງູຮ້າຍເອີຍ, ພວກເຈົ້າຈະໜີພົ້ນໂທດນະລົກ
ໄດ້ຢ່າງໃດ.
[34]ເຫດສັນນັ້ນແຫລະ, ເຮົາໃຊ້ຜູ້ປະກາດພຣະທຳ, ນັກປາດ, ແລະນັກທຳຕ່າງໆມາຫາພວກ
ເຈົ້າ ເຈົ້າກໍຈະຂ້າບາງຄົນເສຍແດ່, ແລະຂົ່ມເຫງໄລ່ເຂົາອອກຈາກເມືອງນີ້ໄປເມືອງນັ້ນແດ່.
[35]ດັ່ງນັ້ນເລືອດອັນບໍ່ມີຜິດທັງໝົດທີ່ຕົກໃສ່ແຜ່ນດິນ ຕັ້ງແຕ່ເລືອດຂອງອາເບັນຜູ້ບໍ່ມີຜິດຈົນເຖິງ
ເລືອດຂອງຊາຂາລີຢາລູກຊາຍຂອງບາຣາຂີຢາ ທີ່ພວກເຈົ້າໄດ້ຂ້າໃນລະຫວ່າງພຣະວິຫານກັບ
ແທນບູຊາ ໂທດເລືອດນັ້ນແຫລະ, ຄົງຈະຕົກໃສ່ພວກເຈົ້າ. [36]ເຮົາບອກພວກເຈົ້າຕາມຄວາມຈິງ
ວ່າ ເຫດເຫລົ່ານີ້ຈະຕົກໃສ່ຄົນສະໃໝນີ້."

## ຊົງເສຍພຣະໄທຍ້ອນກຸງເຢຣູຊາເລັມ

*(ລກ 13:34-35)*

[37]"ໂອ ເຢຣູຊາເລັມ ເຢຣູຊາເລັມເອີຍ, ເຈົ້າທີ່ໄດ້ຂ້າບັນດາຜູ້ປະກາດພຣະທຳແລະເອົາຫີນ
ຄວ່າງໃສ່ພວກທີ່ຮັບໃຊ້ມາຫາເຈົ້າ ເຮົາປາດຖະໜາຈັກເທື່ອແລ້ວໜໍ ວ່າຈະຮວບຮວມເອົາລູກ
ຂອງເຈົ້າໄວ້ ເໝືອນດັ່ງແມ່ໄກ່ຮວບຮວມລູກໄວ້ໃຕ້ປີກຂອງມັນແຕ່ພວກເຈົ້າບໍ່ຍິນຍອມ. [38]ເບິ່ງ
ແມ, ເຮືອນ[ຂ] ຂອງເຈົ້າກໍຈະຖືກປະຮ້າງໄວ້ໃຫ້ຢູ່ວ່າງເປົ່າແກ່ເຈົ້າ. [39]ເພາະວ່າເຮົາບອກພວກ
ເຈົ້າວ່າ ຕັ້ງແຕ່ນີ້ຕໍ່ໄປພວກເຈົ້າຈະບໍ່ເຫັນເຮົາອີກ ຈົນກວ່າພວກເຈົ້າຈະອອກປາກກ່າວວ່າ 'ຂໍໃຫ້
ທ່ານຜູ້ສະເດັດມາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າຈົ່ງຊົງພຣະຈະເລີນ."

---

[ກ]ແທນທີ່ຈະວ່າ "ໃນການຂ້າ" ພາສາເດີມກໍເວົ້າວ່າ "ໃນເລືອດຂອງ..."

[ຂ]ຄຳວ່າ "ເຮືອນ" ໝາຍເຖິງກຸງເຢຣູຊາເລັມ ຫລືວ່າອາດໝາຍເຖິງພຣະວິຫານ

# ບົດທີ 24

## ພຣະວິຫານຈະຖືກທຳລາຍ

*(ມຣກ 13:1-2; ລກ 21:5-6)*

1ຝ່າຍພຣະເຢຊູສະເດັດອອກຈາກບໍລິເວນພຣະວິຫານ ເມື່ອກຳລັງສະເດັດໄປນັ້ນພວກສາວົກ
ຂອງພຣະອົງໄດ້ມາຊີ້ຕຶກທັງຫລາຍໃນບໍລິເວນພຣະວິຫານ ໃຫ້ພຣະອົງທອດພຣະເນດ. 2ພຣະ-
ອົງຈຶ່ງຊົງຕອບວ່າ, "ສິ່ງທັງປວງເຫລົ່ານີ້ພວກທ່ານເຫັນແລ້ວບໍ່ແມ່ນຫລື ເຮົາບອກພວກທ່ານ
ຕາມຄວາມຈິງວ່າ ກ້ອນຫີນທີ່ຊ້ອນທັບກັນຢູ່ທີ່ນີ້ ຈະຖືກທຳລາຍລົງຈົນບໍ່ເຫລືອຈັກກ້ອນດຽວ."

## ເບື້ອງຕົ້ນຂອງຄວາມທຸກລຳບາກ

*(ມຣກ 13:3-13; ລກ 21:7-19)*

3ເມື່ອພຣະອົງປະທັບຢູ່ພູໝາກກອກເທດ ພວກສາວົກມາເຝົ້າພຣະອົງຕ່າງຫາກກາບທູນວ່າ,
"ຂໍໂຜດໃຫ້ພວກຂ້ານ້ອຍຊາບແດ່ວ່າ ເຫດການເຫລົ່ານີ້ຈະເກີດຂຶ້ນໃນເວລາໃດ ສິ່ງໃດເປັນ
ໝາຍສຳຄັນວ່າ ທ່ານຈະມາແລະສະໄໝເກົ່າຈະສິ້ນສຸດລົງ." 4ພຣະເຢຊູຊົງຕອບວ່າ, "ຈົ່ງລະ-
ວັງໃຫ້ດີ ຢ່າໃຫ້ຜູ້ໃດຫລອກລວງພວກທ່ານໃຫ້ຫລົງ. 5ດ້ວຍວ່າຈະມີຫລາຍຄົນມາອ້າງນາມຂອງ
ເຮົາວ່າ 'ເຮົານີ້ແຫລະ, ເປັນພຣະຄຣິດ' ແລະຈະຫລອກລວງຫລາຍຄົນໃຫ້ຫລົງໄປ. 6ພວກ
ທ່ານຈະໄດ້ຍິນເຖິງເລື່ອງການເສິກ ແລະຂ່າວເລົ່າລືເຖິງເລື່ອງການເສິກສົງຄາມ ຈົ່ງລະວັງ ຢ່າ
ຕົກໃຈ ດ້ວຍວ່າເຫດການເຫລົ່ານີ້ຈຳເປັນຕ້ອງເກີດຂຶ້ນ ແຕ່ວ່າທີ່ສຸດປາຍຍັງບໍ່ມາເຖິງ. 7ດ້ວຍ
ວ່າປະເທດຕໍ່ປະເທດແລະອານາຈັກຕໍ່ອານາຈັກຈະສູ້ຮົບກັນ ທັງຈະເກີດການອຶດຢາກແລະ
ແຜ່ນດິນໄຫວໃນບ່ອນຕ່າງໆ. 8ເຫດການທັງປວງນີ້ເປັນເໝືອນຂັ້ນຕົ້ນຂອງຄວາມເຈັບປວດໃນ
ການເກີດລູກ.

9"ເມື່ອນັ້ນເຂົາຈະມອບພວກທ່ານໄວ້ໃຫ້ທົນທຸກລຳບາກແລະຂ້າທ່ານເສຍ ຄົນທຸກຊາດຈະ
ກຽດຊັງພວກທ່ານເພາະເຫັນແກ່ນາມຂອງເຮົາ. 10ຄາວນັ້ນຈະມີຫລາຍຄົນສະດຸດໃຈ, ຈະທັກ-
ຫລັງກັນແລະກັນ[ກ] , ແລະຈະກຽດຊັງເຊິ່ງກັນແລະກັນ. 11ໝໍທຳນວາຍຂີ້ໂລບຫລາຍຄົນຈະ
ເກີດຂຶ້ນ ແລະຈະຫລອກລວງຫລາຍຄົນໃຫ້ຫລົງໄປ. 12ຄວາມຮັກຂອງຄົນສ່ວນຫລາຍຈະເຢັນ
ລົງ ເພາະຄວາມອະທຳຈະແຜ່ກວ້າງອອກໄປ. 13ແຕ່ຜູ້ໃດອົດທົນຈົນເຖິງທີ່ສຸດ ຜູ້ນັ້ນແຫລະ,
ຈະໄດ້ລອດພົ້ນ. 14ຂ່າວປະເສີດເລື່ອງລາຊະອານາຈັກນີ້ຈະໄດ້ປະກາດໄປທົ່ວໂລກ ເພື່ອເປັນ
ຄຳພະຍານແກ່ທຸກໆ ຊາດແລ້ວທີ່ສຸດປາຍຈະມາເຖິງ."

## ຄວາມທຸກລຳບາກອັນໃຫຍ່

*(ມຣກ 13:14-23; ລກ 21:20-24)*

15"ເຫດສັນນັ້ນເມື່ອໃດທ່ານທັງຫລາຍເຫັນສິ່ງທີ່ໜ້າກຽດໜ້າຊັງ ທີ່ເຮັດໃຫ້ເກີດວິບັດຕັ້ງຢູ່ໃນ
ສະຖານທີ່ສັກສິດ[ຂ] ຕາມພຣະທຳທີ່ຊົງໄດ້ກ່າວໄວ້ດ້ວຍດານີເອນຜູ້ປະກາດພຣະທຳນັ້ນ (ໃຫ້ຜູ້
ອ່ານເຂົ້າໃຈເອົາ), 16ເມື່ອນັ້ນໃຫ້ຜູ້ທີ່ຢູ່ແຂວງຢູດາຍປົບໜີໄປຍັງພູ. 17ຜູ້ທີ່ຢູ່ເທິງຫລັງຄາເຮືອນ

---

[ກ]ພາສາເດີມວ່າ "ມອບກັນແລະກັນໄວ້." [ຂ]ຂໍ້ຄວາມນີ້ໝາຍເຖິງການເຮັດໃຫ້ພຣະວິຫານຊົ່ວມົວໝອງດ້ວຍ
ຕັ້ງພຣະທຽມໃຫ້ເປັນທີ່ນັດສະການ.

ຢ່າໃຫ້ຫລົງມາເກັບເອົາສິ່ງຂອງທີ່ຢູ່ໃນເຮືອນຂອງຕົນອອກໄປ. 18ສ່ວນຜູ້ທີ່ຢູ່ຕາມທົ່ງນາກໍຢ່າ
ຕ່າວຄືນມາເອົາເສື້ອຜ້າຂອງຕົນ. 19ແຕ່ໃນວັນເຫລົ່ານັ້ນເປັນໜ້າເວດທະນາເຕັມທີຕໍ່ຜູ້ຍິງທີ່ມີ
ທ້ອງແລະມີລູກອ່ອນກິນນົມຢູ່. 20ຈົ່ງອ້ອນວອນຂໍ ເພື່ອການທີ່ທ່ານຕ້ອງໜີນັ້ນຈະບໍ່ຕົກໃນລະດູ
ໜາວຫລືໃນຊະບາໂຕ. 21ດ້ວຍວ່າໃນຄາວນັ້ນຈະມີຄວາມທຸກລຳບາກອັນໃຫຍ່ຫລາຍຫລວງຢ່າງ
ບໍ່ມີເຄີຍເກີດມີມາຕັ້ງແຕ່ຕົ້ນເດີມໂລກຈົນເຖິງບັດນີ້ ແລະເມື່ອໜ້າຈະບໍ່ມີຕໍ່ໄປອີກຈັກເທື່ອ.
22ແລະຖ້າວັນທັງຫລາຍນັ້ນບໍ່ໄດ້ຊົງບັນດານໃຫ້ສັ້ນເຂົ້າ ຈະບໍ່ມີມະນຸດຄົນໃດລອດພົ້ນໄດ້ ແຕ່
ເພາະເຫັນແກ່ພວກທີ່ຊົງເລືອກໄວ້ນັ້ນ ວັນເຫລົ່ານັ້ນຈຶ່ງໄດ້ຊົງບັນດານໃຫ້ສັ້ນເຂົ້າ. 23ໃນເວລາ
ນັ້ນຖ້າຜູ້ໃດຈະບອກພວກທ່ານວ່າ 'ເບິ່ງແມ, ອົງພຣະຄຣິດຢູ່ທີ່ນີ້' ຫລື 'ຢູ່ທີ່ນັ້ນ' ຢ່າຊູ່ເຊື່ອ.
24ດ້ວຍວ່າຈະມີພຣະຄຣິດທຽມແລະໝໍທຳນວາຍຂີ້ໂລບຫລາຍຄົນເກີດຂຶ້ນ ສະແດງໝາຍສຳຄັນ
ອັນໃຫຍ່ແລະການອັດສະຈັນຕ່າງໆ ເພື່ອຖ້າເປັນໄດ້ ຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້
ໃຫ້ຫລົງ. 25ນີ້ແຫລະ, ເຮົາໄດ້ບອກພວກທ່ານໃຫ້ຮູ້ໄວ້ກ່ອນ. 26ດັ່ງນັ້ນຖ້າເຂົາບອກພວກທ່ານ
ວ່າ 'ເບິ່ງແມ, ທ່ານຜູ້ນັ້ນຢູ່ໃນປ່າ' ພວກທ່ານຢ່າໄດ້ອອກໄປ ຫລືຖ້າເຂົາບອກວ່າ 'ເບິ່ງແມ,
ເພິ່ນຢູ່ໃນຫ້ອງ' ກໍຢ່າຊູ່ເຊື່ອ. 27ດ້ວຍວ່າຟ້າແມບເຫລື້ອມອອກມາແຕ່ທິດຕາເວັນອອກ ສ່ອງໄປ
ເຖິງທິດຕາເວັນຕົກຢ່າງໃດ ການທີ່ບຸດມະນຸດຈະສະເດັດມາກໍຈະເປັນດັ່ງນັ້ນ. 28ຊາກສົບຢູ່ບ່ອນ
ໃດ ຝູງແຮ້ງກໍຈະຕອມບ່ອນນັ້ນ."

## ການສະເດັດມາຂອງບຸດມະນຸດ

*(ມຣກ 13:24-27; ລກ 21:25-28)*

29"ພໍໝົດຄວາມທຸກລຳບາກຂອງວັນເຫລົ່ານັ້ນແລ້ວ, ດວງອາທິດຈະມືດໄປ ແລະດວງຈັນຈະ
ບໍ່ສ່ອງແສງດວງດາວທັງປວງຈະຕົກລົງຈາກຟ້າ ແລະບັນດາສິ່ງທີ່ມີອຳນາດໃນທ້ອງຟ້າຈະສະ-
ທ້ານຫວັ່ນໄຫວ. 30ເມື່ອນັ້ນໝາຍສຳຄັນຂອງບຸດມະນຸດຈະປະກົດຂຶ້ນໃນທ້ອງຟ້າ ມະນຸດທຸກ
ຊາດທົ່ວໂລກຈະຕີອົກຮ້ອງໄຫ້ ແລ້ວຈະເຫັນບຸດມະນຸດກຳລັງສະເດັດມາເທິງເມກໃນທ້ອງຟ້າ
ດ້ວຍລິດທານຸພາບແລະສະຫງ່າລາສີອັນຍິ່ງໃຫຍ່. 31ພຣະອົງໄດ້ໃຊ້ພວກເທວະດາຂອງຕົນໄປ
ດ້ວຍສຽງແກອັນດັງ ໃຫ້ຮວບຮວມເອົາຄົນທັງປວງທີ່ພຣະອົງຊົງເລືອກໄວ້ແລ້ວຈາກທິດທັງສີ່
ຕັ້ງແຕ່ທີ່ສຸດຟ້າເບື້ອງນີ້ຈົນເຖິງທີ່ສຸດຟ້າເບື້ອງນັ້ນ."

## ຄຳອຸປະມາເລື່ອງຕົ້ນເດື່ອເທດ

*(ມຣກ 13:28-31; ລກ 21:29-33)*

32"ຈົ່ງຮຽນຄຳອຸປະມາຈາກຕົ້ນເດື່ອເທດ ເມື່ອກິ່ງກ້ານມັນແຕກໃບອ່ອນອອກພວກທ່ານກໍຮູ້ວ່າ
ລະດູຮ້ອນໃກ້ຈະມາເຖິງແລ້ວ. 33ຢ່າງນີ້ແຫລະ, ພວກທ່ານກໍເໝືອນກັນ ເມື່ອເຫັນເຫດການ
ເຫລົ່ານັ້ນ ຈົ່ງຮູ້ວ່າພຣະອົງສະເດັດມາໃກ້ຈະເຖິງປະຕູແລ້ວ. 34ເຮົາບອກພວກທ່ານຕາມຄວາມ
ຈິງວ່າ ຄົນໃນສະໄໝນີ້ຈະບໍ່ລ່ວງລັບໄປກ່ອນເຫດການທັງປວງນີ້ບັງເກີດຂຶ້ນ. 35ຟ້າແລະດິນກໍ
ຈະລ່ວງພົ້ນໄປ ແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ."

## ເລື່ອງວັນແລະໂມງທີ່ບໍ່ມີໃຜຮູ້

*(ມຣກ 13:32-37; ລກ 17:26-30, 34-36)*

36"ແຕ່ເລື່ອງວັນແລະໂມງນັ້ນບໍ່ມີໃຜຮູ້ ແມ່ນເທວະດາໃນສະຫວັນຫລືພຣະບຸດກໍບໍ່ຮູ້ ຮູ້ແຕ່
ພຣະບິດາອົງດຽວ. 37ດ້ວຍວ່າສະໄໝຂອງໂນອາໄດ້ເປັນຢ່າງໃດ ເມື່ອບຸດມະນຸດສະເດັດມາກໍ
ຈະເປັນຢ່າງນັ້ນ. 38ເພາະວ່າເມື່ອກ່ອນວັນນໍ້າຖ້ວມນັ້ນ ຄົນທັງຫລາຍໄດ້ກິນແລະດື່ມ, ໄດ້ແຕ່ງ-
ງານແລະຍົກໃຫ້ເປັນຜົວເມຍກັນ, ຈົນເຖິງວັນທີ່ໂນອາໄດ້ເຂົ້າໄປໃນນາວາ, 39ແລະນໍ້າໄດ້ມາ
ຖ້ວມກວາດເຂົາໄປໂດຍບໍ່ທັນໄດ້ຮູ້ຕົວຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ.
40ເມື່ອນັ້ນຈະມີຊາຍສອງຄົນຢູ່ທົ່ງນາ ຈະຊົງຮັບຄົນໜຶ່ງໄປ ຈະຊົງປະຄົນໜຶ່ງໄວ້. 41ຈະມີຍິງ
ສອງຄົນກຳລັງໂມ້ແປ້ງຢູ່ທີ່ໂຮງໂມ້ ຈະຊົງຮັບຄົນໜຶ່ງໄວ້ ຈະຊົງປະຄົນໜຶ່ງໄວ້.

42ເຫດສັນນັ້ນພວກທ່ານຈົ່ງເຝົ້າລະວັງຢູ່ ເພາະພວກທ່ານບໍ່ຮູ້ວ່າ ອົງພຣະຜູ້ເປັນເຈົ້າຂອງ
ພວກທ່ານຈະສະເດັດມາໃນເວລາໃດ. 43ແຕ່ຈົ່ງເຂົ້າໃຈຢ່າງນີ້ວ່າ ຖ້າເຈົ້າຂອງເຮືອນໄດ້ຮູ້ກ່ອນ
ວ່າໂຈນຈະມາຍາມໃດ[ກ] ຕົນຈະເຝົ້າລະວັງໄວ້ບໍ່ໃຫ້ຈົນເຈາະເຂົ້າເຮືອນໄດ້. 44ເຫດສັນນັ້ນພວກ
ທ່ານກໍເໝືອນກັນ ຈົ່ງຕຽມໄວ້ໃຫ້ພ້ອມ ເພາະໃນໂມງທີ່ພວກທ່ານບໍ່ທັນຄຶດນັ້ນ ບຸດມະນຸດຈະ
ສະເດັດມາ."

## ເລື່ອງຂ້າໃຊ້ສັດຊື່ແລະຂ້າໃຊ້ຊົ່ວ

*(ລກ 12:41-48)*

45"ເຫດສັນນັ້ນຜູ້ໃດເປັນຂ້າໃຊ້ສັດຊື່ແລະສະຫລາດ ທີ່ນາຍໄດ້ຕັ້ງໄວ້ໃຫ້ເປັນໃຫຍ່ເໜືອພວກ
ຄົນໃຊ້ໃນເຮືອນຂອງຕົນ ເພື່ອແຈກອາຫານໃຫ້ເຂົາຕາມເວລາ. 46ເມື່ອນາຍມາພົບຂ້າໃຊ້ຜູ້ນັ້ນ
ກຳລັງເຮັດຢ່າງນັ້ນຢູ່ ມັນກໍເປັນສຸກ. 47ເຮົາບອກພວກທ່ານຕາມຄວາມຈິງວ່າ ນາຍຈະຕັ້ງຜູ້ນັ້ນ
ໄວ້ເໜືອບັນດາເຂົ້າຂອງໆ ຕົນ. 48ແຕ່ຖ້າຂ້າໃຊ້ຜູ້ນັ້ນຊົ່ວແລະຄຶດວ່າ 'ນາຍຂອງເຮົາມາຊັກຊ້າ
ດອກ', 49ແລ້ວຈຶ່ງຕັ້ງຕົ້ນທຸບຕີເພື່ອນຂ້າໃຊ້ດ້ວຍກັນ ທັງກິນແລະດື່ມ ນຳຄົນຂີ້ເຫລົ້າ, 50ນາຍ
ຂອງຂ້າໃຊ້ຜູ້ນັ້ນຈະມາໃນວັນທີ່ມັນບໍ່ຄຶດ ແລະໃນໂມງທີ່ມັນບໍ່ຮູ້. 51ແລະຈະຜ່າມັນໃຫ້ເປັນສອງ
ຕ່ອນ ທັງຈະໃຫ້ເຂົ້າສ່ວນກັບຄົນໜ້າຊື່ໃຈຄົດ ບ່ອນນັ້ນຈະມີການຮ້ອງໄຫ້ແລະຂົບແຂ້ວຢູ່."

# ບົດທີ 25

## ຄຳອຸປະມາເລື່ອງສາວປອດສິບຄົນ

1"ເມື່ອນັ້ນລາຊະອານາຈັກສະຫວັນຈະປຽບເໝືອນສາວປອດສິບຄົນ ທີ່ຖືໂຄມຂອງຕົນອອກ
ໄປຮັບເຈົ້າບ່າວ. 2ເປັນຄົນໂງ່ຫ້າຄົນແລະຄົນສະຫລາດຫ້າຄົນ. 3ຝ່າຍຄົນໂງ່ນັ້ນເອົາໂຄມຂອງ
ຕົນໄປ ແຕ່ບໍ່ໄດ້ເອົານໍ້າມັນໄປນຳ. 4ແຕ່ຄົນສະຫລາດນັ້ນໄດ້ເອົານໍ້າມັນໃສ່ກວດກັບທັງໂຄມ
ຂອງຕົນໄປດ້ວຍ. 5ເມື່ອເຈົ້າບ່າວຍັງຊ້າຢູ່ ເຂົາກໍພາກັນເຫງົານອນແລະຫລັບໄປ. 6ຄັນເວລາ
ທ່ຽງຄືນກໍມີສຽງຮ້ອງມາວ່າ 'ເບິ່ງແມ, ເຈົ້າບ່າວມາແລ້ວ ຈົ່ງອອກມາຮັບເພິ່ນສາ'. 7ພວກສາວ
ປອດທຸກຄົນກໍຕື່ນຂຶ້ນຈັດແຈງໂຄມຂອງຕົນ. 8ພວກໂງ່ນັ້ນຈຶ່ງເວົ້າກັບພວກສະຫລາດວ່າ 'ຈົ່ງປັນ

---

[ກ]ຄືຍາມໜຶ່ງເປັນລະຍະສາມຊົ່ວໂມງໃນເວລາກາງຄືນ.

ນ້ຳມັນຂອງເຈົ້າໃຫ້ພວກເຮົາແດ່ ເພາະວ່າໂຄມຂອງເຮົາກຳລັງຈະມອດ. 9ຝ່າຍພວກສະຫລາດ
ຈຶ່ງຕອບວ່າ 'ໜ້າຢ້ານວ່ານ້ຳມັນຈະບໍ່ພໍສຳລັບເຮົາແລະເຈົ້າ ຈົ່ງໄປຫາຜູ້ຂາຍແລ້ວຊື້ເອົາສຳລັບ
ຕົນກໍດີກວ່າ.' 10ເມື່ອເຂົາກຳລັງໄປນັ້ນ ເຈົ້າບ່າວກໍມາເຖິງ ແລະຜູ້ທີ່ພ້ອມຢູ່ແລ້ວກໍເຂົ້າໄປນຳ
ເຈົ້າບ່າວໃນການລ້ຽງເນື່ອງໃນງານສົມລົດແລ້ວປະຕູກໍອັດເສຍ. 11ຫລັງຈາກນັ້ນຍິງສາວປອດ
ພວກອື່ນນັ້ນມາຮ້ອງວ່າ 'ນາຍເອີຍ, ນາຍເອີຍ ຂໍໄຂປະຕູໃຫ້ໝູ່ຂ້ານ້ອຍແດ່.' 12ແຕ່ເພິ່ນໄດ້
ຕອບວ່າ 'ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ເຮົາບໍ່ຮູ້ຈັກພວກທ່ານ.' 13ເຫດສັນນັ້ນຈົ່ງ
ເຝົ້າລະວັງຢູ່ ເພາະທ່ານທັງຫລາຍບໍ່ຮູ້ຈັກວັນຫລືໂມງນັ້ນ,"

## ຄຳອຸປະມາເລື່ອງເງິນຕາລັນຕົນ

*(ລກ 19:11-27)*

14"ແລະຍັງປຽບເໝືອນຊາຍຜູ້ໜຶ່ງກຳລັງຈະອອກເດີນທາງໄປ ຈຶ່ງເອີ້ນພວກຂ້ອຍໃຊ້ຂອງຕົນ
ມາຝາກຊັບສົມບັດໄວ້ກັບເຂົາ. 15ຄົນໜຶ່ງເພິ່ນໃຫ້ເງິນຫ້າຕາລັນຕົນ, ຄົນໜຶ່ງສອງຕາລັນຕົນ,
ແລະອີກຄົນໜຶ່ງໃຫ້ຕາລັນຕົນດຽວ ຕາມຄວາມສາມາດຂອງແຕ່ລະຄົນ ແລ້ວກໍອອກເດີນທາງ
ໄປ. 16ຜູ້ທີ່ໄດ້ຮັບຫ້າຕາລັນຕົນກໍເອົາເງິນນັ້ນໄປຄ້າຂາຍທັນທີ ໄດ້ກຳໄລເທົ່າຕົວ. 17ຄົນທີ່ຮັບ
ສອງຕາລັນຕົນກໍໄດ້ກຳໄລເທົ່າຕົວເໝືອນກັນ. 18ແຕ່ຜູ້ໄດ້ຮັບຕາລັນຕົນດຽວ ກໍໄດ້ໄປຂຸດຂຸມ
ແລ້ວເຊື່ອງເງິນນາຍໄວ້. 19ຢູ່ດົນນານຕໍ່ມານາຍຂອງຂ້ອຍໃຊ້ເຫລົ່ານັ້ນກໍກັບມາຄິດບັນຊີກັບ
ເຂົາ. 20ຜູ້ທີ່ໄດ້ຮັບເງິນຫ້າຕາລັນຕົ້ນ ກໍເອົາເງິນກຳໄລຫ້າຕາລັນຕົນມາແຈ້ງວ່າ 'ນາຍເອີຍ,
ນາຍໄດ້ຝາກເງິນຫ້າຕາລັນຕົນໄວ້ນຳຂ້ານ້ອຍ ນີ້ແຫລະ, ຂ້ານ້ອຍໄດ້ກຳໄລຕື່ມອີກຫ້າຕາລັນ
ຕົນ.' 21ຝ່າຍນາຍກໍຕອບວ່າ 'ດີແລ້ວ, ຂ້ອຍໃຊ້ຜູ້ດີແລະສັດຊື່ເອີຍ ເຈົ້າເປັນຜູ້ສັດຊື່ໃນຂອງເລັກ
ນ້ອຍ ເຮົາຈະຕັ້ງໃຫ້ເຈົ້າເປັນຜູ້ເບິ່ງແຍງຂອງຫລາຍຢ່າງຈົ່ງເຂົ້າຮ່ວມຄວາມຍິນດີກັບນາຍເຈົ້າ
ເທີນ'. 22ຜູ້ທີ່ໄດ້ຮັບສອງຕາລັນຕົນນັ້ນໄດ້ເຂົ້າມາເໝືອນກັນແຈ້ງວ່າ 'ນາຍເອີຍ, ນາຍໄດ້ຝາກ
ເງິນສອງຕາລັນຕົນໄວ້ນຳຂ້ານ້ອຍ ນີ້ແຫລະ, ຂ້ານ້ອຍໄດ້ກຳໄລອີກສອງຕາລັນຕົນ.' 23ຝ່າຍ
ນາຍກໍຕອບວ່າ 'ດີແລ້ວ, ຂ້ອຍໃຊ້ຜູ້ດີແລະສັດຊື່ເອີຍ ເຈົ້າເປັນສັດຊື່ໃນຂອງເລັກນ້ອຍ ເຮົາຈະ
ຕັ້ງໃຫ້ເຈົ້າເປັນຜູ້ເບິ່ງແຍງຂອງຫລາຍຢ່າງ ຈົ່ງເຂົ້າຮ່ວມຄວາມຍິນດີກັບນາຍເຈົ້າເທີນ.' 24ສ່ວນ
ຜູ້ທີ່ໄດ້ຮັບຕາລັນຕົນດຽວນັ້ນກໍໄດ້ເຂົ້າມາເໝືອນກັນແຈ້ງວ່າ 'ນາຍເອີຍ, ຂ້ານ້ອຍຮູ້ຈັກທ່ານ
ແລ້ວວ່າທ່ານເປັນຄົນໃຈແຂງ, ເຄີຍກ່ຽວຜົນບ່ອນຕົນບໍ່ໄດ້ຫວ່ານ, ແລະຮິບໂຮມເອົາບ່ອນຕົນບໍ
ໄດ້ຝັດ. 25ຂ້ານ້ອຍຢ້ານຈຶ່ງໄດ້ເອົາເງິນຕາລັນຕົນຂອງທ່ານໄປເຊື່ອງໄວ້ໃຕ້ພື້ນດິນ ນີ້ແຫລະ,
ສິ່ງທີ່ເປັນຂອງທ່ານກໍໄດ້ແລ້ວ.' 26ນາຍຈຶ່ງຕອບວ່າ 'ອ້າຍຂ້ອຍໃຊ້ຊົ່ວແລະຂີ້ຄ້ານເອີຍ ໂຕຮູ້ຫລື
ວ່າເຮົາເຄີຍເກັບຜົນບ່ອນເຮົາບໍ່ໄດ້ຫວ່ານ ແລະຮິບໂຮມເອົາບ່ອນເຮົາບໍ່ໄດ້ຝັດ. 27ຖ້າຢ່າງນັ້ນ,
ໂຕຄວນຈະເອົາເງິນຂອງເຮົາໄປຝາກໄວ້ກັບນາຍທະນາຄານ ແລະເມື່ອເຮົາກັບມາກໍຈະໄດ້ຮັບ
ສິ່ງທີ່ເປັນຂອງເຮົາກັບທັງດອກເບ້ຍ. 28ສັນນັ້ນຈົ່ງຍຶກເງິນຕາລັນຕົນດຽວນັ້ນໄປຈາກມັນເສຍ
ເອົາໃຫ້ແກ່ຜູ້ມີສິບຕາລັນຕົນ. 29ເພາະທຸກຄົນທີ່ມີຢູ່ແລ້ວຈະຊົງເພີ່ມເຕີມໃຫ້ຜູ້ນັ້ນອີກ ຈົນມີບໍລິ-
ບູນ ແຕ່ຜູ້ທີ່ບໍ່ມີ ແມ່ນວ່າສິ່ງທີ່ຕົນມີຢູ່ນັ້ນກໍຈະຊົງຍຶກໄປຈາກຕົນເສຍ. 30ເອົາອ້າຍຂ້າໃຊ້ຜູ້ບໍ່ມີ
ປະໂຫຍດໄປຖິ້ມເສຍບ່ອນມືດພາຍນອກບ່ອນນັ້ນຈະມີການຮ້ອງໄຫ້ແລະຂົບແຂ້ວຢູ່."

## ການຊົງພິພາກສາບັນດາປະຊາຊາດ

31“ເມື່ອບຸດມະນຸດຊົງພຣະລັດສະໝີມີສະເດັດມາພ້ອມດ້ວຍຝູງເທວະດາ ເມື່ອນັ້ນພຣະອົງຈະ
ຊົງປະທັບເທິງພຣະທີ່ນັ່ງອັນຮຸ່ງເຮືອງຂອງພຣະອົງ. 32ບັນດາປະຊາຊາດຕ່າງໆ ຈະຖືກຊົງໂຮມ
ກັນຕໍ່ພຣະພັກຂອງພຣະອົງ ແລະພຣະອົງຈະຊົງແຍກເຂົາອອກຈາກກັນ ເໝືອນຜູ້ລ້ຽງສັດແຍກ
ຝູງແກະອອກຈາກຝູງແບ້. 33ຝູງແກະນັ້ນຈະຊົງຈັດໃຫ້ຢູ່ເບື້ອງຂວາພຣະຫັດຂອງພຣະອົງ ແຕ່
ຝູງແບ້ນັ້ນຈະຊົງຈັດໃຫ້ຢູ່ເບື້ອງຊ້າຍ. 34ເມື່ອນັ້ນພຣະມະຫາກະສັດຈະຊົງກ່າວແກ່ບັນດາຜູ້ທີ່ຢູ່
ເທິງພຣະຫັດຂວາຂອງພຣະອົງວ່າ ‘ພວກທ່ານທີ່ໄດ້ຮັບພຣະພອນຈາກພຣະບິດາຂອງເຮົາເອີຍ
ຈົ່ງມາຮັບເອົາລາຊະອານາຈັກ ຊຶ່ງໄດ້ ຊົງຈັດຕຽມໄວ້ສຳລັບທ່ານຕັ້ງແຕ່ຕົ້ນເດີມໂລກ. 35ເພາະ-
ວ່າເມື່ອເຮົາຢາກເຂົ້າ ພວກທ່ານກໍໃຫ້ເຮົາກິນ ເຮົາຫິວນ້ຳ ພວກທ່ານກໍໃຫ້ເຮົາດື່ມ ເຮົາເປັນ
ແຂກບ້ານ ພວກທ່ານກໍໄດ້ຕ້ອນຮັບເຮົາໄວ້. 36ເຮົາເປືອຍຕົວ ພວກທ່ານກໍໄດ້ເອົາເຄື່ອງມາໃຫ້
ເຮົານຸ່ງຫົ່ມ ເຮົາເຈັບປ່ວຍ ພວກທ່ານກໍມາຢ້ຽມຢາມເຮົາ ເຮົາຢູ່ໃນຄຸກພວກທ່ານກໍມາໄດ້ຫາ.’
37ເມື່ອນັ້ນບັນດາພວກສິນທຳຈະທູນວ່າ ‘ພຣະອົງເຈົ້າເອີຍ, ພວກຂ້າພະອົງໄດ້ເຫັນພຣະອົງຊົງ
ຢາກເຂົ້າຫລືຫິວນ້ຳ ແລ້ວໄດ້ຈັດມາຖວາຍພຣະອົງເມື່ອໃດ. 38ພວກຂ້າພະອົງໄດ້ເຫັນພຣະອົງ
ຊົງເປັນແຂກບ້ານ ແລະໄດ້ຕ້ອນຮັບໄວ້ ຫລືຊົງເປືອຍພຣະກາຍແລ້ວໄດ້ເອົາເຄື່ອງມາໃຫ້ຫົ່ງ
ເມື່ອໃດ.’ 39ພວກຂ້າພະອົງໄດ້ເຫັນພຣະອົງຊົງປະຊວນຢູ່ ຫລືຢູ່ໃນຄຸກ ແລະໄດ້ມາເຝົ້າພຣະອົງ
ເມື່ອໃດ.’ 40ຝ່າຍພຣະມະຫາກະສັດຈະຊົງຕອບວ່າ ‘ເຮົາບອກທ່ານຕາມຄວາມຈິງວ່າ ທີ່ພວກ
ທ່ານໄດ້ເຮັດການເຫລົ່ານີ້ແກ່ພວກຕ່ຳຕ້ອຍທີ່ສຸດຄົນໜຶ່ງໃນພວກພີ່ນ້ອງຂອງເຮົານີ້ ກໍໄດ້ເຮັດໃຫ້
ເຮົາເໝືອນກັນ.’

41ເມື່ອນັ້ນພຣະອົງຈະຊົງກ່າວກັບບັນດາຜູ້ທີ່ຢູ່ເບື້ອງພຣະຫັດຊ້າຍຂອງພຣະອົງວ່າ ‘ສູທັງ-
ຫລາຍຜູ້ຖືກປ້ອຍເວນ, ຈົ່ງຖອຍໜີຈາກເຮົາເຂົ້າໄປໃນໄຟທີ່ໄໝ້ຢູ່ເປັນນິດຊຶ່ງຊົງຈັດຕຽມໄວ້ສຳ-
ລັບພະຍາມານກັບບໍລິວານຂອງມັນ. 42ເພາະວ່າເຮົາຢາກເຂົ້າ ສູບໍ່ໄດ້ໃຫ້ເຮົາກິນ ເຮົາຫິວນ້ຳ ສູ
ບໍ່ໃຫ້ເຮົາດື່ມ. 43ເຮົາເປັນແຂກບ້ານມາ ສູບໍ່ໄດ້ພາເຮົາເຂົ້າໄປ ເຮົາເປືອຍຕົວ ແຕ່ສູບໍ່ໄດ້ເອົາ
ເຄື່ອງມາໃຫ້ນຸ່ງ ເຮົາເຈັບປ່ວຍແລະຢູ່ໃນຄຸກ ແຕ່ສູບໍ່ໄດ້ມາຢ້ຽມຢາມເຮົາ.’ 44ເຂົາຈະທູນຕອບ
ວ່າ ‘ພຣະອົງເຈົ້າເອີຍ, ພວກຂ້າພະອົງໄດ້ເຫັນພຣະອົງຊົງຢາກເຂົ້າຫລືຊົງຫິວນ້ຳ ຊົງເປັນແຂກ
ບ້ານມາ, ຊົງເປືອຍພຣະກາຍ, ຊົງປະຊວນຫລືຊົງຢູ່ໃນຄຸກ ແລະພວກຂ້າພະອົງບໍ່ໄດ້ປະຕິບັດ
ພຣະອົງຍາມໃດ.’ 45ເມື່ອນັ້ນພຣະອົງຈະຊົງຕອບແກ່ເຂົາວ່າ ‘ເຮົາບອກສູທັງຫລາຍຕາມຄວາມ
ຈິງວ່າ ທີ່ສູບໍ່ໄດ້ເຮັດການເຫລົ່ານັ້ນແກ່ຜູ້ຕ່ຳຕ້ອຍທີ່ສຸດໃນພວກນີ້ ພວກສູກໍບໍ່ໄດ້ເຮັດແກ່ເຮົາ
ເໝືອນກັນ.’ 46ແລ້ວພວກເຫລົ່ານີ້ ຈະອອກໄປສູ່ໂທດອັນຕະຫລອດໄປເປັນນິດ ແຕ່ພວກສິນທຳ
ກໍເຂົ້າສູ່ຊີວິດອັນຕະຫລອດ ໄປເປັນນິດ.

# ບົດທີ 26

## ພວກຫົວໜ້າປອງຮ້າຍພຣະເຢຊູ

*(ມຣກ 14:1-2; ລກ 22:1-2; ຢຮ 10:45-53)*

[1]ເມື່ອ ພຣະເຢຊູ ຊົງກ່າວຖ້ອຍຄຳເຫລົ່ານີ້ສິ້ນສຸດລົງແລ້ວ ພຣະອົງຊົງບອກພວກສາວົກຂອງ
ຕົນວ່າ, [2]"ທ່ານທັງຫລາຍຮູ້ຢູ່ວ່າອີກສອງວັນກໍຈະເຖິງເທດສະການປັດສະຄາ ແລະບຸດມະນຸດ
ຈະຖືກມອບໄວ້ໃຫ້ເຂົາຕອກຄຶງໄວ້ທີ່ໄມ້ກາງແຂນ." [3]ໃນເວລານັ້ນພວກປະໂລຫິດຕົນໃຫຍ່ກັບ
ພວກເຖົ້າແກ່ຂອງພົນລະເມືອງໄດ້ປະຊຸມກັນຢູ່ທີ່ສຳນັກຂອງມະຫາໂລຫິດຊື່ກາຍະຟາ. [4]ເຂົາ
ປຶກສາກັນເພື່ອຈະໄດ້ຈັບພຣະເຢຊູດ້ວຍກົນອຸບາຍເອົາໄປຂ້າເສຍ. [5]ແຕ່ເຂົາເວົ້າກັນວ່າ, "ຢ່າ
ໄດ້ເຮັດການນັ້ນ ໃນລະຫວ່າງວັນເທດສະການ ຢ້ານພົນລະເມືອງຈະເກີດວຸ້ນວາຍ."

## ການຖອກນໍ້າມັນຫອມໃສ່ພຣະສຽນທີ່ບ້ານເບັດທານີ

*(ມຣກ 14:3-9; ຢຮ 12:1-8)*

[6]ເມື່ອ ພຣະເຢຊູປະທັບຢູ່ບ້ານເບັດທານີ ໃນເຮືອນຂອງຊີໂມນຄົນຂີ້ທູດ, [7]ມີຍິງຜູ້ໜຶ່ງຖືກະ-
ອອມຫີນຂາວເຕັມດ້ວຍນໍ້າມັນຫອມທີ່ມີລາຄາແພງເຂົ້າມາເຝົ້າພຣະອົງ ຂະນະເມື່ອພຣະອົງຊົງ
ນັ່ງຮັບປະທານອາຫານຢູ່ ນາງໄດ້ຖອກນໍ້າຫອມໃສ່ພຣະສຽນຂອງພຣະອົງ. [8]ແຕ່ເມື່ອພວກສາ-
ວົກເຫັນດັ່ງນັ້ນກໍເຄືອງໃຈຈຶ່ງເວົ້າວ່າ, "ເຫດໃດຈຶ່ງເຮັດໃຫ້ເສຍຂອງໆ ຢ່າງນີ້. [9]ເພາະຖ້າຂາຍ-
ຂອງນີ້ກໍຄົງໄດ້ເງິນຈຳນວນຫລາຍ ແລ້ວຈະແຈກໃຫ້ຄົນຍາກຈົນກໍໄດ້." [10]ແຕ່ພຣະເຢຊູຊົງ
ຊາບຈຶ່ງກ່າວແກ່ເຂົາວ່າ, "ພວກທ່ານກວນໃຈຍິງນີ້ເຮັດຫຍັງ ນາງໄດ້ເຮັດການດີແກ່ເຮົາແລ້ວ.
[11]ດ້ວຍວ່າຄົນຍາກຈົນມີຢູ່ກັບພວກທ່ານສະເໝີ ແຕ່ຝ່າຍເຮົາບໍ່ຢູ່ກັບພວກທ່ານສະເໝີ. [12]ຊຶ່ງຍິງ
ນີ້ໄດ້ຖອກນໍ້າມັນຫອມໃສ່ກາຍຂອງເຮົາ ກໍໄດ້ເຮັດເພື່ອການປົງສົບຂອງເຮົາ. [13]ເຮົາບອກພວກ
ທ່ານຕາມຄວາມຈິງວ່າ ຂ່າວປະເສີດນີ້ປະກາດໄປເຖິງບ່ອນໃດໃນທົ່ວພິພົບ ການທີ່ຍິງຜູ້ນີ້ໄດ້
ເຮັດກໍຈະເລື່ອງລືໄປເຖິງບ່ອນນັ້ນເປັນທີ່ລະນຶກເຖິງນາງ."

## ຢູດາອິສະກາຣີອົດຕົກລົງຈະມອບພຣະເຢຊູໄວ້

*(ມຣກ 14:10-11; ລກ 22:3-6)*

[14]ເມື່ອນັ້ນຜູ້ໜຶ່ງໃນພວກສິບສອງຄົນນັ້ນຊື່ຢູດາອິສະກາຣີອົດ ໄດ້ໄປຫາພວກປະໂລຫິດຕົນ
ໃຫຍ່, [15]ຖາມວ່າ, "ພວກທ່ານຈະຍອມໃຫ້ອັນໃດໃຫ້ແກ່ຂ້ານ້ອຍ ສ່ວນຂ້ານ້ອຍຈະມອບເພິ່ນໃຫ້
ແກ່ພວກທ່ານ" ເຂົາຈຶ່ງເອົາເງິນສາມສິບຫລຽນໃຫ້ແກ່ຢູດາ. [16]ຕັ້ງແຕ່ນັ້ນມາຢູດາໄດ້ຊອກຫາ
ໂອກາດເພື່ອຈະມອບພຣະອົງໄວ້.

## ຊົງຮັບປະທານປັດສະຄາພ້ອມກັບສາວົກ

*(ມຣກ 14:12-21; ລກ 22:7-14, 21-23; ຢຮ 13:21-30)*

[17]ເມື່ອວັນຕົ້ນເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ພວກສາວົກໄດ້ມາທູນຖາມພຣະອົງວ່າ,
"ທ່ານປະສົງຈະໃຫ້ພວກຂ້ານ້ອຍຈັດແຈງປັດສະຄາໃຫ້ເພິ່ນຮັບປະທານບ່ອນໃດ." [18]ພຣະອົງ
ຊົງຕອບວ່າ, "ຈົ່ງເຂົ້າໄປຫາຄົນໜຶ່ງໃນກຸງບອກວ່າ 'ອາຈານກ່າວວ່າ ເວລາກຳນົດຂອງເຮົາມາ
ໃກ້ແລ້ວ ເຮົາຈະຖືສິນປັດສະຄາທີ່ເຮືອນຂອງທ່ານພ້ອມກັບສາວົກຂອງເຮົາ.'" [19]ແລ້ວພວກສາ-

ວົກຈຶ່ງໄດ້ເຮັດຕາມທີ່ພຣະເຢຊູຊົງສັ່ງ ແລ້ວເຂົາໄດ້ຈັດແຈງປັດສະຄາໄວ້ພ້ອມ. 20ຄັນເຖິງເວ-
ລາຄໍ່າແລ້ວພຣະອົງຊົງປະທັບຮ່ວມໂຕະກັບພວກສາວົກສິບສອງຄົນ. 21ເມື່ອກໍາລັງຮັບປະທານ
ອາຫານຢູ່ ພຣະອົງຊົງກ່າວວ່າ, “ເຮົາບອກພວກທ່ານຕາມຄວາມຈິງວ່າ ຄົນໜຶ່ງໃນພວກທ່ານ
ຈະທໍລະຍົດຕໍ່ເຮົາ.” 22ຝ່າຍສາວົກກໍມີຄວາມທຸກໃຈຫລາຍ ທຸກຄົນຕ່າງກໍຕັ້ງຕົ້ນທູນພຣະອົງວ່າ,
“ບໍ່ອາດຈະແມ່ນຂ້ານ້ອຍຕີ້, ນາຍເອີຍ.” 23ພຣະອົງຊົງຕອບວ່າ, “ຜູ້ທີ່ໄດ້ຈໍ້າຮ່ວມຊາມດຽວກັບ
ເຮົາ ຜູ້ນັ້ນແຫລະ, ຈະທໍລະຍົດຕໍ່ເຮົາ. 24ບຸດມະນຸດສະເດັດໄປຕາມທີ່ໄດ້ຂຽນໄວ້ໃນພຣະຄໍາພີ
ເຖິງເລື່ອງເພິ່ນ ແຕ່ວິບັດແກ່ຜູ້ທີ່ຈະທໍລະຍົດຕໍ່ບຸດມະນຸດ ຖ້າຜູ້ນັ້ນບໍ່ເກີດມາກໍດີກວ່າ.” 25ຢູດາຜູ້
ທີ່ທໍລະຍົດຕໍ່ພຣະອົງທູນຖາມວ່າ, “ບໍ່ອາດຈະແມ່ນຂ້ານ້ອຍຕີ້, ອາຈານເອີຍ” ພຣະອົງຊົງຕອບ
ວ່າ, “ແມ່ນທ່ານນັ້ນແລ້ວ.”

## ຊົງຕັ້ງສິນມະຫາສະໜິດ

*(ມຣກ 14:22-26; ລກ 22:15-20; 1 ກຣທ 11:23-26)*

26ລະຫວ່າງອາຫານມື້ນັ້ນ ພຣະເຢຊູຊົງຈັບເຂົ້າຈີ່ມາ ແລະເມື່ອຂໍພຣະພອນແລ້ວ ຊົງຫັກ
ເຂົ້າຈີ່ນັ້ນໃຫ້ພວກສາວົກ ໂດຍຊົງກ່າວວ່າ, “ຈົ່ງຮັບກິນສາ ນີ້ແຫລະ, ຄືກາຍຂອງເຮົາ.”
27ແລ້ວພຣະອົງຊົງຈັບເອົາຈອກມາໂມທະນາພຣະຄຸນແລະຍື່ນໃຫ້ເຂົາ ໂດຍຊົງກ່າວວ່າ, “ຈົ່ງ
ດື່ມແຕ່ຈອກນີ້ທຸກຄົນ. 28ເພາະວ່ານີ້ແຫລະຄືເລືອດຂອງເຮົາ ແມ່ນເລືອດອັນກ່ຽວກັບພຣະສັນ-
ຍາ ທີ່ຖອກອອກເພື່ອຍົກຜິດບາບຄົນຈໍານວນຫລາຍ. 29ເຮົາບອກທ່ານທັງຫລາຍວ່າ ເຮົາຈະບໍ່
ດື່ມນໍ້າຜົນອະງຸ່ນຕໍ່ໄປອີກຈົນກວ່າວັນນັ້ນມາເຖິງ ຄືວັນທີ່ຈະດື່ມອັນໃໝ່ກັບພວກທ່ານໃນລາຊະ
ແຜນດິນພຣະບິດາຂອງເຮົາ.” 30ເມື່ອຮ້ອງເພງສັນລະເສີນແລ້ວ ເຂົາກໍພາກັນອອກໄປຍັງພູ
ໝາກກອກເທດ.

## ຊົງທໍານວາຍວ່າເປໂຕຈະປະຕິເສດພຣະອົງ

*(ມຣກ 14:27-31; ລກ 22:31-34; ຢຮ 13:36-38)*

31ເມື່ອນັ້ນ ພຣະເຢຊູຊົງກ່າວກັບພວກສາວົກວ່າ, “ໃນຄືນວັນນີ້ທ່ານທຸກຄົນຈະສະດຸດໃຈ
ເພາະເຮົາ ເພາະມີຄໍາຂຽນໄວ້ໃນພຣະຄໍາພີວ່າ ‘ເຮົາຈະປະຫານຜູ້ລ້ຽງແກະຝູງນັ້ນຈະແຕກຊະ
ກັນໄປ.’

32ແຕ່ເມື່ອເຮົາຖືກຊົງບັນດານໃຫ້ເປັນຄືນມາຈາກຕາຍແລ້ວ ເຮົາຈະໄປເຖິງແຂວງຄາລີເລ
ກ່ອນໜ້າພວກທ່ານ.” 33ຝ່າຍເປໂຕຈຶ່ງທູນຕອບພຣະອົງວ່າ, “ຖ້າຄົນທັງປວງຈະສະດຸດໃຈ
ເພາະທ່ານ ຝ່າຍຂ້ານ້ອຍຈະບໍ່ສະດຸດໃຈຈັກເທື່ອ.” 34ພຣະເຢຊູຊົງຕອບເປໂຕວ່າ, “ໃນຄືນວັນ
ນີ້ກ່ອນໄກ່ຈະຂັນ ທ່ານຈະປະຕິເສດເຮົາເຖິງສາມເທື່ອ.” 35ເປໂຕທູນພຣະອົງວ່າ, “ເຖິງແມ່ນ
ຂ້ານ້ອຍຈະຕ້ອງຕາຍກັບທ່ານ ຂ້ານ້ອຍຈະບໍ່ປະຕິເສດທ່ານຈັກເທື່ອ” ຝ່າຍພວກສາວົກກໍທູນ
ຢ່າງນັ້ນເໝືອນກັບທຸກຄົນ.

## ຊົງອ້ອນວອນທີ່ເຄັດເຊມາເນ

*(ມຣກ 14:32-42; ລກ 22:39-46)*

36ແລ້ວພຣະເຢຊູກໍສະເດັດພ້ອມກັບພວກສາວົກ ໄປເຖິງບ່ອນໜຶ່ງຊື່ເຄັດເຊມາເນຈຶ່ງຊົງກ່າວ

ກັບເຂົາວ່າ, "ຈົ່ງນັ່ງຢູ່ທີ່ນີ້ ໃນເວລາເຮົາຈະໄປອ້ອນວອນຢູ່ທີ່ນັ້ນ." 37ພຣະອົງຊົງພາເປໂຕກັບ
ລູກຊາຍທັງສອງຂອງເຊເປດາຍໄປນຳ ແລ້ວຊົງເກີດມີຄວາມໂສກເສົ້າແລະໜັກເພາະໄທ
ຫລາຍ. 38ພຣະອົງຊົງກ່າວກັບເຂົາວ່າ, "ຈິດໃຈຂອງເຮົາທຸກໜັກແທບຈະຕາຍຢູ່ແລ້ວ ຈົ່ງຄອຍ
ຢູ່ທີ່ນີ້ ເຝົ້າຢູ່ກັບເຮົາເທີນ," 39ແລ້ວສະເດັດໄປອີກໜ້ອຍໜຶ່ງ ຈິ່ງຊົງໝູບພຣະພັກລົງເຖິງດິນ
ອ້ອນວອນວ່າ, "ໂອບິດາເອີຍ, ຖ້າເປັນໄດ້ຂໍໃຫ້ຈອກນີ້ເລື່ອນພົ້ນໄປຈາກລູກທ້ອນ ແຕ່ຢ່າງໃດກໍ
ດີ, ຂໍຢ່າໃຫ້ເປັນໄປຕາມໃຈປາດຖະໜາຂອງລູກ ແຕ່ໃຫ້ເປັນໄປຕາມພຣະໄທຂອງພຣະອົງ
ເທີນ" 40ແລ້ວພຣະອົງໄດ້ສະເດັດກັບມາຫາສາວົກເຫລົ່ານັ້ນ ຊົງເຫັນເຂົານອນຫລັບຢູ່ ແລະຊົງ
ກ່າວແກ່ເປໂຕວ່າ, "ຢ່າງນັ້ນພວກທ່ານບໍ່ສາມາດຈະຄອຍເຝົ້າຢູ່ກັບເຮົາຈັກທຸ່ມດຽວຫລື. 41ຈົ່ງ
ເຝົ້າລະວັງແລະອ້ອນວອນ ຢູ່ເພື່ອພວກທ່ານຈະບໍ່ຕົກໃນການທົດລອງ ຈິດໃຈພ້ອມຢູ່ແລ້ວກໍຈິງ
ແຕ່ກາຍກໍອ່ອນກຳລັງ." 42ພຣະອົງໄດ້ສະເດັດອອກໄປອີກເປັນເທື່ອທີສອງ ຊົງອ້ອນວອນ ວ່າ,
"ບິດາຂ້ານ້ອຍເອີຍ, ຖ້າຈອກນີ້ເລື່ອນພົ້ນໄປບໍ່ໄດ້ເວັ້ນແຕ່ຂ້ານ້ອຍຈຳຕ້ອງດື່ມ ກໍບໍ່ໃຫ້ເປັນໄປ
ຕາມນ້ຳພຣະໄທຂອງພຣະອົງ." 43ຄັນສະເດັດກັບຄືນມາກໍຊົງເຫັນພວກສາວົກນອນຫລັບຢູ່
ເພາະຕາຂອງເຂົາມືນບໍ່ຂຶ້ນ. 44ຈິ່ງຊົງປະເຂົາໄວ້ສະເດັດໄປອ້ອນວອນເປັນເທື່ອທີ່ສາມ ໂດຍຊົງ
ກ່າວຄຳເກົ່ານັ້ນອີກ. 45ແລ້ວພຣະອົງໄດ້ສະເດັດມາຍັງພວກສາວົກຊົງກ່າວວ່າ, "ພວກທ່ານຍັງ
ນອນຫລັບເຊົາເມື່ອຍຢູ່ຫລື ເບິ່ງແມ, ເວລາມາໃກ້ແລ້ວ ບຸດມະນຸດກຳລັງຈະຖືກມອບໄວ້ໃນມື
ຄົນບາບ. 46ຈົ່ງລຸກຂຶ້ນມາໄປກັນເທາະ ເບິ່ງແມ, ຜູ້ທີ່ຈະມອບເຮົານັ້ນມາໃກ້ແລ້ວ."

## ຊົງຖືກມອບໄວ້ແລະຈັບໄປ

*(ມຣກ 14:24-50; ລກ 22:27-53; ຢຮ 18:2-12)*

47ເມື່ອພຣະອົງຍັງຊົງກ່າວບໍ່ທັນຂາດຄຳ ເບິ່ງແມ, ຜູ້ໜຶ່ງໃນຈຳພວກສິບສອງຄົນນັ້ນຄືຢູດາ
ໄດ້ເຂົ້າມາພ້ອມດ້ວຍປະຊາຊົນຈຳນວນຫລາຍ ຖືດາບຖືໄມ້ຄ້ອນມາຈາກພວກປະໂລຫິດຕົນ
ໃຫຍ່ກັບພວກຜູ້ເຖົ້າແກ່ຂອງພົນລະເມືອງ. 48ຜູ້ທີ່ຈະມອບພຣະອົງນັ້ນໄດ້ນັດໝາຍສຳຄັນໃຫ້ແກ່
ເຂົາວ່າ, "ເຮົາຈະຈູບຄຳນັບຜູ້ໃດກໍແມ່ນຜູ້ນັ້ນແຫລະຈົ່ງຈັບເອົາໄວ້." 49ຢູດາເຂົ້າມາຫາພຣະ-
ເຢຊູທັນທີທູນວ່າ, "ສະບາຍດີ, ອາຈານເຈົ້າຂ້າ" ແລ້ວຈູບພຣະອົງຢ່າງຮັກແພງ. 50ຝ່າຍພຣະ-
ເຢຊູຊົງກ່າວວ່າແກ່ຢູດາວ່າ, "ສະຫາຍເອີຍ, ມາທີ່ນີ້ເຮັດຫຍັງ"[ກ] ແລ້ວຄົນເຫລົ່ານັ້ນເຂົ້າມາ
ລົງມືຈັບພຣະເຢຊູໄວ້. 51ຂະນະນັ້ນ ເບິ່ງແມ, ທີ່ມີຜູ້ໜຶ່ງທີ່ຢູ່ກັບພຣະເຢຊູ ຊັກດາບອອກຟັນ
ຂ້ອຍໃຊ້ຄົນໜຶ່ງຂອງມະຫາປະໂລຫິດ ຖືກຫູຂາດເບື້ອງໜຶ່ງ. 52ພຣະເຢຊູຈິ່ງຊົງບອກຜູ້ນັ້ນວ່າ,
"ຈົ່ງເອົາດາບຂອງທ່ານມ້ຽນໄວ້ບ່ອນມັນ ເພາະວ່າບັນດາຜູ້ທີ່ຖືດາບກໍຈະຖືກທຳລາຍດ້ວຍດາບ.
53ທ່ານຄິດວ່າເຮົາຈະຂໍຄວາມຊ່ອຍເຫລືອຈາກພຣະບິດາຂອງເຮົາບໍ່ໄດ້ຫລື ແລະໃນທັນທີພຣະ-
ອົງຈະໃຊ້ເທວະດາມາຫາເຮົາກວ່າສິບສອງກອງ.[ຂ] 54ແຕ່ຖ້າຢ່າງນັ້ນພຣະຄຳພີທີ່ວ່າຈຳຕ້ອງ
ເປັນຢ່າງນັ້ນຈະສຳເລັດໄດ້ຢ່າງໃດ." 55ໃນເວລານັ້ນພຣະເຢຊູໄດ້ຊົງກ່າວກັບປວງຊົນວ່າ,
"ທ່ານທັງຫລາຍຖືດາບຖືໄມ້ຄ້ອນອອກມາຈັບເຮົາເໝືອນຈັບໂຈນຫລື ເຮົາໄດ້ນັ່ງສັ່ງສອນໃນບໍ-

---

[ກ]ຫລືວ່າ "ຈົ່ງເຮັດຕາມທີ່ທ່ານຕັ້ງໃຈມານັ້ນ."

[ຂ]ສະໄໝນັ້ນກອງທັບແຫ່ງຊາດປະເທດໂຣມກອງໜຶ່ງຕ້ອງນັບເປັນຈຳນວນທະຫານຫົກພັນຄົນ.

ລີເວນພຣະວິຫານທຸກໆ ວັນແຕ່ພວກທ່ານບໍ່ໄດ້ຈັບເຮົາ. 56ແຕ່ເຫດການທັງປວງນີ້ໄດ້ບັງເກີດ
ຂຶ້ນ ເພື່ອຈະສຳເລັດຕາມທີ່ຜູ້ປະກາດພຣະທຳໄດ້ຂຽນໄວ້.”ເມື່ອນັ້ນພວກສາວົກທັງໝົດໄດ້ປະ
ພຣະອົງພາກັນໜີໄປ.

## ພຣະເຢຊູຊົງຢູ່ຕໍ່ໜ້າສານສູງສຸດ

*(ມຣກ 14:53-65; ລກ 22:54-55, 66-71; ຢຮ 18:12-14, 19-24)*

57ພວກທີ່ຈັບພຣະເຢຊູໄດ້ພາພຣະອົງໄປຫາມະຫາປະໂລຫິດຊື່ກາຢະຟາ ບ່ອນທີ່ພວກນັກ-
ທຳແລະພວກເຖົ້າແກ່ໄດ້ມາປະຊຸມກັນນັ້ນ. 58ຝ່າຍເປໂຕໄດ້ຕາມພຣະອົງໄປໃນໄລຍະຫ່າງໄກ
ຈົນມາເຖິງເດີ່ນບ້ານຂອງມະຫາປະໂລຫິດແລ້ວເຂົ້າໄປນັ່ງຢູ່ກາງເດີ່ນບ້ານກັບພວກຍາມ ເພື່ອ
ຊອມເບິ່ງວ່າທີ່ສຸດຂອງເລື່ອງນັ້ນຈະເປັນຢ່າງໃດ. 59ພວກປະໂລຫິດຕົນໃຫຍ່ກັບບັນດາສະມາ-
ຊິກສານຈຶ່ງຫາພະຍານຕົວະມາເບີກຕໍ່ສູ້ພຣະເຢຊູເພື່ອຂ້າພຣະອົງເສຍ. 60ເຖິງແມ່ນວ່າມີພະ-
ຍານຕົວະຫລາຍປາກມາໃຫ້ການກໍດີ ແຕ່ກໍຫາຫລັກຖານບໍ່ໄດ້ ໃນທີ່ສຸດມີສອງຄົນໄດ້ມາໃຫ້-
ການ, 61ວ່າ, “ຜູ້ນີ້ແຫລະ, ໄດ້ກ່າວວ່າເຮົາສາມາດຈະມ້າງພຣະວິຫານຂອງພຣະເຈົ້າແລະຈະ
ສ້າງຂຶ້ນໃໝ່ພາຍໃນສາມວັນ’.” 62ມະຫາປະໂລຫິດໄດ້ຢືນຂຶ້ນຖາມພຣະອົງວ່າ, “ເຈົ້າບໍ່ຕອບ
ຫຍັງຫລື ຄຳພະຍານທີ່ຄົນເຫລົ່ານີ້ກ່າວຕໍ່ສູ້ເຈົ້າເປັນແນວໃດ.” 63ແຕ່ພຣະເຢຊູຊົງມິດຢູ່ ແລ້ວ
ມະຫາປະໂລຫິດຈຶ່ງກ່າວວ່າ, “ເຮົາໃຫ້ເຈົ້າສາບານໂດຍອ້າງພຣະເຈົ້າຜູ້ຊົງພຣະຊົນຢູ່ ໃຫ້ເຈົ້າ
ບອກເຮົາວ່າເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າຫລືບໍ່,” 64ພຣະເຢຊູຊົງຕອບວ່າ,
“ທ່ານເວົ້ານັ້ນແລ້ວ ແລະຫລາຍກວ່ານັ້ນອີກ, ເຮົາບອກພວກທ່ານວ່າ ໃນເວລາຕໍ່ໄປພວກທ່ານ
ຈະເຫັນບຸດມະນຸດນັ່ງຢູ່ເບື້ອງຂວາຂອງຜູ້ຊົງລິດທານຸພາບ ແລະກຳລັງສະເດັດມາເທິງເມກໃນ
ທ້ອງຟ້າ,” 65ເມື່ອນັ້ນມະຫາປະໂລຫິດໄດ້ຈີກເສື້ອຜ້າຂອງຕົນແລ້ວກ່າວວ່າ, “ມັນໄດ້ເວົ້າໝິ່ນ-
ປະໝາດພຣະເຈົ້າແລ້ວ ພວກເຮົາຍັງຈະຕ້ອງການພະຍານອັນໃດອີກ ນີ້ແຫລະ, ທ່ານໄດ້ຍິນ
ຄຳປະໝາດນັ້ນແລ້ວ. 66ພວກທ່ານຄິດເຫັນຢ່າງໃດ” ເຂົາກໍຕອບວ່າ, “ຄວນຖືກໂທດປະຫານ
ຊີວິດ,” 67ແລ້ວເຂົາໄດ້ຖົ່ມນ້ຳລາຍໃສ່ພຣະພັກທັງທຸບຕີພຣະອົງ ແລະລາງຄົນໄດ້ເອົາມືຕົບ
ພຣະອົງ, 68ແລ້ວເວົ້າວ່າ, “ເຈົ້າພຣະຄຣິດ, ແມ່ນໃຜຕີມຶງ ທວາຍພວກເຮົາຟັງແມ.”

## ເປໂຕປະຕິເສດພຣະເຢຊູ

*(ມຣກ 14:66-72; ລກ 22:56-62; ຢຮ 18:15-18, 25-28)*

69ຝ່າຍເປໂຕນັ່ງຢູ່ນອກກາງເດີ່ນບ້ານ ມີຍິງໃຊ້ຄົນໜຶ່ງມາຫາກ່າວວ່າ, “ໂຕເຄີຍຢູ່ກັບໄທ
ຄາລີເລ ຄືເຢຊູນັ້ນເໝືອນກັນ.” 70ແຕ່ເປໂຕຕອບປະຕິເສດຕໍ່ໜ້າຄົນທັງປວງວ່າ, “ທີ່ເຈົ້າເວົ້າ
ນັ້ນ, ຂ້ອຍບໍ່ຮູ້ເລື່ອງ.” 71ເມື່ອເປໂຕອອກໄປທີ່ປະຕູບ້ານມີຍິງໃຊ້ອີກຄົນໜຶ່ງແລເຫັນ ຈຶ່ງກ່າວ
ແກ່ຄົນທັງຫລາຍທີ່ຢູ່ຫັ້ນວ່າ, “ຄົນນີ້ແຫລະ, ເຄີຍຢູ່ກັບເຢຊູໄທນາຊາເຣັດ.” 72ເປໂຕໄດ້ປະຕິ-
ເສດທັງສາບານວ່າ, “ຂ້ອຍບໍ່ຮູ້ຈັກຄົນນັ້ນ.” 73ພາຍຫລັງນັ້ນໜ້ອຍໜຶ່ງຄົນທັງຫລາຍທີ່ຢືນຢູ່ຫັ້ນ
ໄດ້ມາເວົ້າກັບເປໂຕວ່າ, “ໂຕເປັນພັກພວກຂອງເຂົາເຫລົ່ານັ້ນແທ້ ດ້ວຍວ່າສຳນຽງຂອງໂຕກໍສໍ້
ໃຫ້ຮູ້ໂຕເອງ.” 74ເມື່ອນັ້ນເປໂຕກໍຕັ້ງຕົ້ນປ້ອຍດາ ທັງສະບົດສາບານວ່າ, “ຄົນນັ້ນກູບໍ່ຮູ້ຈັກ” ໃນ
ທັນໃດນັ້ນໄກ່ກໍຂັນ. 75ແລ້ວເປໂຕຈຶ່ງລະນຶກເຖິງຄຳທີ່ພຣະເຢຊູຊົງກ່າວໄວ້ວ່າ, “ກ່ອນໄກ່ຂັນ

ທ່ານຈະປະຕິເສດເຮົາເຖິງສາມເທື່ອ", ແລ້ວເປໂຕກໍອອກໄປຂ້າງນອກຮ້ອງໄຫ້ເປັນທຸກໜັກໃຈ.

# ບົດທີ 27

## ຊົງຖືກພາໄປຕໍ່ໜ້າປີລາດ

*(ມຣກ 15:1; ລກ 23:1-2; ຢຮ 18:28-32)*

1ເມື່ອຮຸ່ງເຊົ້າພວກປະໂລຫິດຕົນໃຫຍ່ທັງໝົດແລະພວກເຖົ້າແກ່ຂອງພົນລະເມືອງ ໄດ້ປຶກສາ
ກັນຕໍ່ສູ້ພຣະເຢຊູ ເພື່ອຈະປະຫານຊີວິດພຣະອົງເສຍ. 2ເຂົາໄດ້ມັດພຣະອົງພາໄປມອບໃຫ້ປີລາດ
ຜູ້ປົກຄອງ.

## ຄວາມຕາຍຂອງຢູດາອິສະກາຣີອົດ

3ຝ່າຍຢູດາຜູ້ທໍລະຍົດຕໍ່ພຣະອົງນັ້ນ ເມື່ອເຫັນວ່າພຣະອົງຕ້ອງຖືກໂທດກໍກິນແໜງຈຶ່ງນຳເອົາ
ເງິນສາມສິບຫລຽນນັ້ນມາສົ່ງຄືນໃຫ້ແກ່ພວກປະໂລຫິດຕົນໃຫຍ່ແລະແລະພວກເຖົ້າແກ່. 4ໂດຍ
ເວົ້າວ່າ, "ຂ້ານ້ອຍຜິດແລ້ວ ເພາະໄດ້ມອບຜູ້ບໍ່ມີຜິດໃຫ້ເຖິງຄວາມຕາຍ" ຄົນເຫລົ່ານັ້ນຕອບວ່າ,
"ການນັ້ນແມ່ນທຸລະອັນໃດກັບພວກເຮົາ ໃຫ້ເປັນທຸລະຂອງເຈົ້າເອງ." 5ຢູດາຈຶ່ງຖິ້ມເງິນໄວ້ໃນ
ພຣະວິຫານແລະຈາກໄປແລ້ວອອກໄປຜູກຄໍຕາຍເສຍ. 6ພວກປະໂລຫິດຕົນໃຫຍ່ໄດ້ເກັບເງິນນັ້ນ
ໄວ້ແລ້ວເວົ້າວ່າ, "ເປັນການຜິດກົດບັນຍັດທີ່ຈະເກັບເງິນນັ້ນໄວ້ໃນຄັງພຣະວິຫານ ເພາະເປັນຄ່າ
ຕັດຊີວິດ."[ກ] 7ເຂົາໄດ້ປຶກສາຕົກລົງກັນແລ້ວຈຶ່ງໄດ້ເອົາເງິນນັ້ນໄປຊື້ດິນຂອງຊ່າງປັ້ນໝໍ້ ເພື່ອ
ໃຫ້ເປັນບ່ອນຝັງສົບຄົນຕ່າງດ້າວ. 8ເພາະສັນນັ້ນເຂົາຈຶ່ງເອີ້ນທີ່ດິນນັ້ນວ່າ ດິນເລືອດຈົນເຖິງທຸກ
ວັນນີ້. 9ເມື່ອນັ້ນກໍສຳເລັດຕາມພຣະທຳທີ່ຊົງບອກໄວ້ດ້ວຍເຢເຣມີຢາຜູ້ປະກາດພຣະທຳ ທີ່ວ່າ,
"ເຂົາໄດ້ຮັບເງິນສາມສິບຫລຽນ ຊຶ່ງເປັນລາຄາຜູ້ທີ່ເຂົາຕາດລາຄາໄວ້ ຄືຜູ້ທີ່ເຜົ່າພັນຂອງອິສຣາ-
ເອນບາງຄົນໄດ້ຕີລາຄານັ້ນ. 10ແລ້ວເຂົາໄດ້ເອົາເງິນນັ້ນໃຫ້ເປັນຄ່າສຳລັບນາຂອງຊ່າງປັ້ນໝໍ້
ຕາມທີ່ອົງພຣະຜູ້ເປັນເຈົ້າໄດ້ຊົງສັ່ງຂ້າພຣະເຈົ້າໄວ້."

## ປີລາດໄຕ່ຖາມພຣະເຢຊູ

*(ມຣກ 15:4-5; ລກ 23:3-4; ຢຮ 18:33-38)*

11ເມື່ອພຣະເຢຊູຊົງຢືນຢູ່ຕໍ່ໜ້າຜູ້ປົກຄອງ ຜູ້ປົກຄອງຈຶ່ງຖາມພຣະອົງວ່າ, "ເຈົ້າເປັນກະສັດ
ຂອງຊາດຢິວຫລື." ພຣະເຢຊູຊົງຕອບວ່າ, "ທ່ານເວົ້ານັ້ນແລ້ວ." 12ເມື່ອພວກປະໂລຫິດຕົນ
ໃຫຍ່ແລະພວກເຖົ້າແກ່ໄດ້ກ່າວໂທດໃສ່ພຣະອົງ ພຣະອົງກໍບໍ່ໄດ້ຊົງຕອບປະການໃດ. 13ປີລາດ
ຈຶ່ງກ່າວແກ່ພຣະອົງວ່າ, "ເຈົ້າບໍ່ໄດ້ຍິນຫລືເຂົາເບີກພະຍານຕໍ່ສູ້ເຈົ້າຫລາຍປະການເທົ່າໃດ."
14ແຕ່ພຣະເຢຊູບໍ່ໄດ້ຊົງຕອບຈັກຄຳ ຈົນຜູ້ປົກຄອງປະຫລາດໃຈຫລາຍ.

## ພຣະເຢຊູຖືກພິພາກສາເຖິງສິ້ນພຣະຊົນ

*(ມຣກ 15:6-15; ລກ 23:13-45; ຢຮ 18:39-19:16)*

15ໃນຄາວເທດສະການນັ້ນຜູ້ປົກຄອງເຄີຍປ່ອຍນັກໂທດຄົນໜຶ່ງ ໃຫ້ແກ່ປະຊາຊົນຕາມທີ່ເຂົາ
ຮ້ອງຂໍ. 16ຄາວນັ້ນມີນັກໂທດຄົນໜຶ່ງຜູ້ທີ່ເຂົາຮູ້ຈັກທົ່ວໄປ ຊື່ບາຣາບາ. 17ເມື່ອປະຊາຊົນມາປະ-

---

[ກ]ພາສາເດີມວ່າ "ເປັນຄ່າເລືອດ"

ຊຸມກັນແລ້ວ ປີລາດ ໄດ້ຖາມເຂົາວ່າ, “ພວກເຈົ້າຢາກໃຫ້ເຮົາປ່ອຍຜູ້ໃດ ປ່ອຍ ເຢຊູ ບາຣາບາ
ຫລື ເຢຊູ ທີ່ເອີ້ນວ່າ ພຣະຄຣິດ.” 18ເພາະ ປີລາດ ຮູ້ຢູ່ວ່າເຂົາໄດ້ມອບພຣະອົງໄວ້ດ້ວຍຄວາມອິດ-
ສາ. 19ຂະນະທີ່ ປີລາດ ນັ່ງຢູ່ບ່ອນພິພາກສານັ້ນ ພັນລະຍາຂອງທ່ານໄດ້ໃຊ້ຄົນມາຮຽນວ່າ, “ຢ່າ
ໄດ້ພົວພັນກັບເລື່ອງຄົນທີ່ບໍ່ມີຜິດນັ້ນ ດ້ວຍວ່າວັນນີ້ຂ້ານ້ອຍມີຄວາມທຸກໃຈຫລາຍຍ້ອນຄວາມ
ຝັນກ່ຽວຜູ້ນັ້ນ.” 20ຝ່າຍພວກປະໂລຫິດຕົນໃຫຍ່ກັບພວກເຖົ້າແກ່ໄດ້ຍົວະຍົງປະຊາຊົນ ໃຫ້ຂໍ
ປ່ອຍ ບາຣາບາ ແລະໃຫ້ຂ້າ ພຣະເຢຊູ ເສຍ. 21ຜູ້ປົກຄອງຈຶ່ງຖາມເຂົາອີກວ່າ, “ໃນສອງຄົນນີ້
ພວກເຈົ້າຢາກໃຫ້ເຮົາປ່ອຍຜູ້ໃດ” ເຂົາຕອບວ່າ, “ບາຣາບາ.” 22ແລ້ວ ປີລາດ ຈຶ່ງກ່າວກັບເຂົາ
ວ່າ, “ຖ້າຢ່າງນັ້ນ, ເຮົາຈະເຮັດຢ່າງໃດ ແກ່ ເຢຊູ ຜູ້ເອີ້ນວ່າ ພຣະຄຣິດ” ເຂົາພາກັນຕອບວ່າ,
“ໃຫ້ຄຶງເສຍທີ່ໄມ້ກາງແຂນ.” 23ຜູ້ປົກຄອງຈຶ່ງເວົ້າວ່າ, “ຄຶງເຮັດຫຍັງ ຄົນນີ້ໄດ້ເຮັດຜິດອັນໃດ”
ເຂົາແຮ່ງພາກັນຮ້ອງຂຶ້ນວ່າ, “ໃຫ້ຄຶງເສຍທີ່ໄມ້ກາງແຂນ.”

24ເມື່ອ ປີລາດ ເຫັນວ່າບໍ່ໄດ້ຜົນ ມີແຕ່ການວຸ້ນວາຍກຳລັງເກີດຂຶ້ນ ຈຶ່ງໄດ້ເອົານ້ຳມາລ້າງມືຕໍ່-
ໜ້າປະຊາຊົນ ໂດຍກ່າວວ່າ, “ເຮົາບໍ່ມີຜິດດ້ວຍເລື່ອງຄວາມຕາຍ[ກ] ຂອງຜູ້ນີ້ ໃຫ້ເປັນທຸລະ
ຂອງພວກເຈົ້າເອງ.” 25ແລະປະຊາຊົນພາກັນຕອບວ່າ, “ໃຫ້ໂທດເລື່ອງຄວາມຕາຍຂອງມັນຕົກ
ໃສ່ພວກເຮົາກັບທັງລູກຫລານຂອງເຮົາ.” 26ປີລາດ ຈຶ່ງປ່ອຍບາຣາບາໃຫ້ເຂົາ ແລະເມື່ອໃຫ້ຂ້ຽນ
ພຣະເຢຊູ ແລ້ວ ກໍມອບໃຫ້ຄຶງໄວ້ທີ່ໄມ້ກາງແຂນ.

## ພວກທະຫານຫົວລໍ້ພຣະເຢຊູ

*(ມຣກ 15:16-20; ຢຣ 19:2-3)*

27ເມື່ອນັ້ນ ພວກທະຫານຂອງຜູ້ປົກຄອງໄດ້ພາ ພຣະເຢຊູ ເຂົ້າໄປໃນ ໄປຣໂຕຣຽມ ແລ້ວໄດ້
ຮວບຮວມທະຫານທັງກອງ[ຂ] ມາອ້ອມພຣະອົງໄວ້. 28ເຂົາໄດ້ເລີກເຄື່ອງທົງຂອງພຣະອົງອອກ
ແລ້ວເອົາເສື້ອສີແດງມານຸ່ງໃຫ້. 29ເຂົາໄດ້ເອົາເຄືອໜາມຖັກເປັນໂຄ້ງແທນພວງມາໄລສຸບໃສ່
ພຣະສຽນຂອງພຣະອົງ ແລ້ວເອົາໄມ້ອໍ້ໃຫ້ພຣະອົງຖືໄວ້ໃນພຣະຫັດເບື້ອງຂວາ ແລະຄຸເຂົ່າລົງຕໍ່
ພຣະພັກພຣະອົງ ກ່າວຄຳເຍາະເຍີ້ຍຫົວລໍ້ພຣະອົງວ່າ, “ກະສັດຂອງຊາດ ຢິວ ເຮີຍ, ຈົ່ງຊົງ
ພຣະຈະເລີນເທີນ.” 30ເຂົາໄດ້ຖົ່ມນ້ຳລາຍໃສ່ພຣະອົງ ແລະໄດ້ເອົາໄມ້ອໍ້ນັ້ນຕີພຣະສຽນພຣະອົງ.
31ເມື່ອເຍາະເຍີ້ຍພຣະອົງແລ້ວເຂົາໄດ້ຖອດເສື້ອນັ້ນອອກ ແລ້ວເອົາເຄື່ອງທົງຂອງພຣະອົງມານຸ່ງ
ໃຫ້ ຈຶ່ງພາພຣະອົງອອກໄປເພື່ອຄຶງໄວ້ທີ່ໄມ້ກາງແຂນ.

## ການຄຶງທີ່ໄມ້ກາງແຂນ

*(ມຣກ 15:21-32; ລກ 23:26-43; ຢຣ 19:17-27)*

32ເມື່ອກຳລັງອອກໄປນັ້ນເຂົາໄດ້ພົບໄທ ກີເຣເນ ຄົນໜຶ່ງທີ່ຊື່ຊີໂມນ ຈຶ່ງເກນຄົນນັ້ນໃຫ້ແບກ
ໄມ້ກາງແຂນຂອງພຣະອົງໄປ. 33ເມື່ອມາເຖິງບ່ອນໜຶ່ງເອີ້ນວ່າ ໂຄລະໂຄທາ (ທີ່ແປວ່າ ບ່ອນ
ກະໂຫລກຫົວ), 34ເຂົາໄດ້ເອົາເຫລົ້າແວງປະສົມກັບນ້ຳບີມາໃຫ້ພຣະອົງສະເຫວີຍ ແຕ່ເມື່ອຊົງ
ຊີມແລ້ວ ພຣະອົງບໍ່ຊົງຍອມສະເຫວີຍ. 35ເມື່ອໄດ້ຄຶງພຣະອົງທີ່ໄມ້ກາງແຂນແລ້ວ ເຂົາກໍເອົາ
ເຄື່ອງທົງຂອງພຣະອົງມາຈົກສະຫລາກແບ່ງປັນກັນ. 36ແລ້ວກໍພາກັນນັ່ງເຝົ້າພຣະອົງຢູ່ທີ່ນັ້ນ.

---

[ກ]“ດ້ວຍເລື່ອງຄວາມຕາຍ” ພາສາເດີມວ່າ “ດ້ວຍເລື່ອງເລືອດ.” [ຂ]ຢ່າງໜ້ອຍຈຳນວນຫ້າຮ້ອຍຄົນ.

37ເຂົາໄດ້ເອົາຂໍ້ຄວາມກ່າວໂທດຕິດໄວ້ເໜືອພຣະສຽນຂອງພຣະອົງ ຊຶ່ງອ່ານວ່າ, "ຜູ້ນີ້ຄື ເຢຊູ
ກະສັດຂອງຊາດຢິວ." 38ເວລານັ້ນເຂົາໄດ້ເອົາໂຈນສອງຄົນຄຶງໄວ້ກັບພຣະອົງ ເບື້ອງຂວາຄົນ
ໜຶ່ງເບື້ອງຊ້າຍຄົນໜຶ່ງ. 39ຝ່າຍຄົນທັງປວງທີ່ຍ່າງຜ່ານໄປມານັ້ນ ກໍໝິ່ນປະໝາດພຣະອົງແລະ
ສັ່ນຫົວ, 40ໂດຍກ່າວວ່າ, "ເຈົ້າຜູ້ມ້າງພຣະວິຫານແລະສ້າງຂຶ້ນໃໝ່ໃນສາມວັນເຮີຍ, ຈົ່ງຊ່ອຍ
ຕົວເອງໃຫ້ພົ້ນ ຖ້າເຈົ້າເປັນບຸດຂອງ ພຣະເຈົ້າ ແລະຈົ່ງລົງມາຈາກໄມ້ກາງແຂນແມ." 41ໃນທຳ-
ນອງດຽວກັນນັ້ນພວກພະໂລຫິດຕົນໃຫຍ່ ກັບພວກນັກທຳແລະພວກຜູ້ເຖົ້າແກ່ກໍໄດ້ເຍາະເຍີ້ຍ
ພຣະອົງວ່າ, 42"ມັນຊ່ອຍຄົນອື່ນໃຫ້ພົ້ນໄດ້ ແຕ່ຊ່ອຍຕົວເອງບໍ່ໄດ້ ມັນເປັນກະສັດອິສຣາເອນ
ໃຫ້ມັນລົງມາຈາກໄມ້ກາງເຂນດຽວນີ້ເທາະແລ້ວພວກເຮົາຈະໄດ້ເຊື່ອຖືມັນ. 43'ທ່ານໄດ້ວາງໃຈ
ໃນ ພຣະເຈົ້າ ຖ້າ ພຣະເຈົ້າ ຊົງພໍພຣະໄທໃນທ່ານ ກໍໃຫ້ ພຣະເຈົ້າ ໂຜດໃຫ້ທ່ານພົ້ນໄດ້ໃນບັດນີ້'
ເພາະມັນໄດ້ເວົ້າວ່າ 'ເຮົາເປັນບຸດຂອງ ພຣະເຈົ້າ'." 44ຢ່າງດຽວກັນນັ້ນ ພວກໂຈນຜູ້ຖືກຄຶງໄວ້
ພ້ອມກັນກັບພຣະອົງກໍໄດ້ກ່າວຄຳຫຍາບຊ້າຕໍ່ພຣະອົງເໝືອນກັນ.

## ຊົງສິ້ນພຣະຊົນ

*(ມຣກ 15:33-41; ລກ 23:44-49; ຢຮ 19:28-30)*

45ແລ້ວໄດ້ເກີດການມືດມົວທົ່ວແຜ່ນດິນຕັ້ງແຕ່ທ່ຽງໂມງ[ກ] ຈົນເຖິງເກົ້າໂມງ.[ຂ] 46ຄັນປະມານ
ເກົ້າໂມງ ພຣະເຢຊູ ຊົງຮ້ອງສຽງດັ່ງວ່າ, "ເອລີ ໆ ແລມາ ຊາບັກທານີ" (ແປວ່າ, "ພຣະເຈົ້າ
ຂອງຂ້າພຣະອົງ, ພຣະເຈົ້າ ຂອງຂ້າພຣະອົງເອີຍ, ເຫດສັນໃດຈຶ່ງຊົງປະຖິ້ມຂ້າພຣະອົງເສຍ").
47ບາງຄົນທີ່ຢືນຢູ່ນັ້ນເມື່ອໄດ້ຍິນກໍເວົ້າວ່າ, "ຄົນຜູ້ນີ້ເອີ້ນຫາເອລີຢາ." 48ໃນທັນໃດນັ້ນມີຜູ້ໜຶ່ງ
ໃນພວກເຂົາແລ່ນໄປເອົາຟອງນ້ຳຈຸ່ມເຫລົ້າແວງສົ້ມໃຫ້ເຕັມ ແລ້ວສຽບໃສ່ປາຍໄມ້ອໍ້ຍື່ນໃຫ້ພຣະ-
ອົງສະເຫວີຍ. 49ແຕ່ຄົນອື່ນເວົ້າວ່າ, "ຟ້າວເທື່ອ, ຖ້າເບິ່ງກ່ອນວ່າ ເອລີຢາ ຈະມາຊ່ອຍມັນໃຫ້ພົ້ນ
ຫລືບໍ່." 50ສ່ວນ ພຣະເຢຊູ ກໍຊົງຮ້ອງສຽງດັ່ງຂຶ້ນອີກ ແລ້ວຊົງປ່ອຍຈິດວິນຍານໄປ. 51ແລະເບິ່ງ
ແມ, ຜ້າກັ້ງໃນພຣະວິຫານກໍຊົງຖືກຈີກໄປສອງທ່ອນ ຕັ້ງແຕ່ເທິງລົງເຖິງລຸ່ມ ແຜ່ນດິນກໍສະທ້ານ
ຫວັ່ນໄຫວ ສີລາກໍແຕກອອກຈາກກັນ. 52ອຸບໂມງຝັງສົບກໍໄຂອອກ ສົບພວກໄພ່ພົນຂອງ ພຣະ-
ເຈົ້າ ຫລາຍຄົນທີ່ລ່ວງລັບໄປແລ້ວກໍເປັນຄືນມາ. 53ເຂົາທັງຫລາຍຈຶ່ງພາກັນອອກຈາກອຸບໂມງ
ແລະເມື່ອ ພຣະເຢຊູ ຊົງເປັນຄືນມາແລ້ວກໍໄດ້ເຂົ້າໄປໃນນະຄອນສັກສິດ ປະກົດຕົວໃຫ້ຫລາຍຄົນ
ເຫັນ. 54ສ່ວນນາຍຮ້ອຍແລະທະຫານທີ່ເຝົ້າພຣະສົບ ພຣະເຢຊູ ຢູ່ນຳກັນ ເມື່ອໄດ້ເຫັນແຜ່ນດິນ
ຫວັ່ນໄຫວແລະເຫດການທັງປວງທີ່ເກີດຂຶ້ນນັ້ນ ກໍພາກັນຢ້ານຫລາຍຈຶ່ງເວົ້າກັນວ່າ, "ຈິງແທ້-
ແລ້ວ, ທ່ານຜູ້ນີ້ແມ່ນ ພຣະບຸດ ຂອງ ພຣະເຈົ້າ." 55ຢູ່ທີ່ນັ້ນມີຜູ້ຍິງຫລາຍຄົນຄອຍເບິ່ງແຕ່ທາງໄກ
ຄືພວກຍິງທີ່ໄດ້ຕິດຕາມແລະບົວລະບັດ ພຣະເຢຊູ ຕັ້ງແຕ່ ແຂວງ ຄາລີເລ ມາ. 56ໃນພວກນັ້ນມີ
ມາຣີອາ ໄທ ມັກດາລາ, ມາຣີອາ ມານດາຂອງ ຢາໂກໂບ ແລະ ໂຢເຊັບ ກັບມານດາຂອງລູກຊາຍ
ຂອງ ເຊເບດາຍ.

---

[ກ]ປັດຈຸບັນນີ້ເຄີຍເວົ້າວ່າ ເວລາທ່ຽງ. [ຂ]ປັດຈຸບັນເຄີຍເວົ້າວ່າ ບ່າຍສາມໂມງ.

## ການວາງພຣະສົບໃສ່ອຸບໂມງ

*(ມຣກ 15:42-47; ລກ 23:50-56; ຢຮ 19:38-42)*

57ເມື່ອຄ່ຳມາແລ້ວມີເສດຖີຄົນໜຶ່ງຊື່ໂຢເຊັບ ເປັນໄທບ້ານອາຣີມາທາຍ ຊຶ່ງໄດ້ເຂົ້າເປັນສິດ
ຂອງພຣະເຢຊູເໝືອນກັນ. 58ທ່ານຜູ້ນີ້ໄດ້ໄປຫາປີລາດຂໍເອົາພຣະສົບພຣະເຢຊູ ປີລາດຈຶ່ງຊົງ
ໃຫ້ມອບພຣະສົບນັ້ນແກ່ເພິ່ນ. 59ໂຢເຊັບກໍອັນເຊີນເອົາພຣະສົບ ແລ້ວເອົາຜ້າປ່ານສະອາດຫຸ້ມຫໍ່
ໄວ້, 60ແລະອັນເຊີນພຣະສົບໄປບັນຈຸວາງໃນອຸບໂມງໃໝ່ຂອງຕົນ ຊຶ່ງທ່ານໄດ້ສະກັດໄວ້ໃນຫີນ
ແລ້ວກິ້ງຫີນໃຫຍ່ກ້ອນໜຶ່ງອັດປາກອຸບໂມງໄວ້ຈຶ່ງໜີໄປ. 61ຝ່າຍມາຣີອາໄທມັກດາລາ ມາຣີອາ
ອີກຄົນໜຶ່ງນັ້ນ ກໍນັ່ງຢູ່ຕໍ່ໜ້າອຸບໂມງ.

## ທະຫານຍາມເຝົ້າທີ່ອຸບໂມງ

62ວັນໜ້າມາ ຄືວັນຖັດຈາກວັນຈັດແຈງ ພວກປະໂລຫິດຕົນໃຫຍ່ກັບພວກຟາຣີຊາຍໄດ້ພາ-
ກັນໄປຫາປີລາດ, 63ຮຽນວ່າ, “ທ່ານທີ່ນັບຖື, ພວກຜູ້ຂ້າຈື່ຈຳໄດ້ວ່າຄົນຫລອກລວງຜູ້ນັ້ນ ເມື່ອ
ຍັງມີຊີວິດຢູ່ ມັນໄດ້ເວົ້າວ່າ ‘ພາຍຫລັງສາມວັນແລ້ວເຮົາຈະເປັນຄືນມາ’. 64ດ້ວຍເຫດນັ້ນຂໍທ່ານ
ບັນຊາສັ່ງໃຫ້ເຝົ້າອຸບໂມງໄວ້ຢ່າງແຂງແຮງຈົນເຖິງວັນຖ້ວນສາມ ຢ້ານວ່າພວກສາວົກຂອງມັນ
ຈະມາລັກເອົາສົບໄປແລ້ວຈະກ່າວຕໍ່ພົນລະເມືອງວ່າ ‘ເພິ່ນເປັນຄືນມາຈາກຕາຍແລ້ວ’ ການ
ຫລອກລວງຄັ້ງສຸດທ້າຍນີ້ຈະຮ້າຍແຮງກວ່າຄັ້ງກ່ອນ.” 65ປີລາດໄດ້ບອກເຂົາວ່າ, “ພວກທ່ານມີ
ທະຫານຍາມ ຈົ່ງໄປເຝົ້າ[ກ] ໃຫ້ແຂງແຮງຕາມຄວາມເຫັນຂອງພວກທ່ານ.” 66ແລະເຂົາກໍໄດ້
ພາກັນໄປເຮັດໃຫ້ອຸບໂມງນັ້ນໝັ້ນຄົງ ໂດຍປະທັບຕາໃສ່ຫີນໄວ້ແລະຕັ້ງທະຫານຍາມໃຫ້ເຝົ້າຢູ່.

# ບົດທີ 28

## ການຊົງຄືນພຣະຊົນ

*(ມຣກ 16:1-8; ລກ 24:1-12; ຢຮ 20:1-20)*

1ພາຍຫລັງວັນສະບາໂຕນັ້ນເວລາໃກ້ຮຸ່ງເຊົ້າວັນຕົ້ນສັບປະດາ ມາຣີອາໄທມັກດາລາ ກັບ
ມາຣີອາອີກຄົນໜຶ່ງນັ້ນ ໄດ້ພາກັນໄປເບິ່ງອຸບໂມງ. 2ເບິ່ງແມ, ເກີດແຜ່ນດິນຫວັ່ນໄຫວຢ່າງໜັກ
ເພາະເທວະດາຕົນໜຶ່ງຂອງອົງພຣະຜູ້ເປັນເຈົ້າລົງມາຈາກສະຫວັນໄດ້ກິ້ງກ້ອນຫີນອອກຈາກ
ອຸບໂມງແລ້ວກໍນັ່ງເທິງຫີນນັ້ນ. 3ລັກສະນະຂອງເທວະດາຕົນນັ້ນເໝືອນແສງຟ້າແມບ ເຄື່ອງນຸ່ງ
ກໍຂາວເໝືອນຫິມະ. 4ພວກຄົນຍາມທີ່ເຝົ້າຢູ່ກໍຢ້ານເທວະດານັ້ນ ແລະກາຍເປັນເໝືອນຄົນຕາຍ.
5ຝ່າຍເທວະດາຕົນນັ້ນໄດ້ກ່າວແກ່ພວກຜູ້ຍິງວ່າ, “ພວກເຈົ້າຢ່າຊູ່ຢ້ານ ເຮົາກໍຮູ້ແລ້ວວ່າພວກເຈົ້າ
ມາຊອກຫາພຣະເຢຊູ ຜູ້ທີ່ຖືກຄຶງໄວ້ທີ່ໄມ້ກາງແຂນ. 6ພຣະອົງບໍ່ປະທັບທີ່ນີ້ ເພາະຖືກຊົງບັນ-
ດານໃຫ້ເປັນຄືນມາ ຕາມທີ່ພຣະອົງໄດ້ຊົງກ່າວແລ້ວ ຈົ່ງມາເບິ່ງບ່ອນທີ່ພຣະອົງໄດ້ບັນທົມຢູ່ນັ້ນ.
7ແລ້ວຈົ່ງຮີບໄປບອກພວກສາວົກຂອງພຣະອົງວ່າ ‘ພຣະອົງຖືກຊົງບັນດານໃຫ້ເປັນຄືນມາຈາກ
ຕາຍແລ້ວ ແລະເບິ່ງແມ, ພຣະອົງສະເດັດໄປຍັງແຂວງຄາລີເລກ່ອນທ່ານທັງຫລາຍ ພວກທ່ານ
ຈະໄດ້ເຫັນພຣະອົງຢູ່ທີ່ນັ້ນ’ ນີ້ແຫລະ, ເຮົາໄດ້ບອກພວກເຈົ້າແລ້ວ.” 8ຍິງເຫລົ່ານັ້ນກໍຮີບໄປ

---

[ກ]ຫລືວ່າ “ຈົ່ງເອົາທະຫານຍາມໝູ່ໜຶ່ງໄປເຝົ້າ...”

ຈາກອຸບໂມງທັງຢ້ານທັງຍິນດີຫລາຍ ແລ່ນໄປບອກພວກສາວົກຂອງພຣະອົງ, 9ແລະເບິ່ງແມ,
ພຣະເຢຊູໄດ້ສະເດັດມາພົບເຂົາແລະຊົງກ່າວວ່າ, "ຈົ່ງຈະເລີນເທີນ" ຍິງເຫລົ່ານັ້ນກໍເຂົ້າມາຈັບ
ພຣະບາດນະມັດສະການພຣະອົງ. 10ພຣະເຢຊູຊົງກ່າວວ່າ, "ຢ່າຊູ່ຢ້ານ ຈົ່ງໄປບອກພວກພີ່-
ນ້ອງຂອງເຮົາ ໃຫ້ໄປຍັງແຂວງຄາລີເລ ເຂົາໄດ້ເຫັນເຮົາທີ່ນັ້ນ."

## ລາຍງານຂອງທະຫານຍາມ

11ເມື່ອຍິງເຫລົ່ານັ້ນກຳລັງໄປ ມີຜູ້ເຝົ້າຍາມລາງຄົນໄດ້ເຂົ້າໄປໃນເມືອງ ເລົ່າເຫດການທັງ
ປວງທີ່ເກີດຂຶ້ນນັ້ນ ໃຫ້ພວກປະໂລຫິດຕົນໃຫຍ່ຟັງ. 12ເມື່ອພວກປະໂລຫິດຕົນໃຫຍ່ໄດ້ປະຊຸມ
ປຶກສາກັນກັບພວກເຖົ້າແກ່ແລ້ວ ກໍເອົາເງິນຈຳນວນຫລາຍແຈກໃຫ້ພວກທະຫານ, 13ສັ່ງວ່າ,
"ໃຫ້ພວກເຈົ້າເວົ້າວ່າ 'ພວກສາວົກຂອງມັນໄດ້ມາໃນເວລາກາງຄືນ ລັກເອົາສົບໄປເວລາໝູ່ເຮົາ
ນອນຫລັບຢູ່. 14ຖ້າຄວາມນີ້ຊາບເຖິງຜູ້ປົກຄອງ ພວກເຮົາຈະຊັກຊວນເອົາໃຈເພິ່ນ ຈົ່ງໃຫ້ພວກ
ເຈົ້າພົ້ນຄວາມຮ້ອນໃຈ." 15ເຂົາໄດ້ຮັບເງິນແລ້ວກໍພາກັນເຮັດຕາມຄຳແນະນຳນັ້ນຄວາມນີ້ໄດ້
ຊ່າລືໄປໃນບັນດາພວກຢິວຈົນເຖິງທຸກວັນນີ້.

## ພຣະເຢຊູຊົງສັ່ງສາວົກ

*(ມຣກ 16:14-18; ລກ 24:36-49; ຢຮ 20:19-26; ກຈກ 1:9-11)*

16ແຕ່ພວກສາວົກສິບເອັດຄົນນັ້ນໄດ້ໄປຍັງແຂວງຄາລີເລ ເຖິງພູທີ່ພຣະເຢຊູໄດ້ຊົງກຳນົດ
ໄວ້ກັບເຂົາ. 17ເມື່ອເຂົາເຫັນພຣະອົງແລ້ວຈຶ່ງຂາບໄຫວ້ນະມັດສະການ ແຕ່ລາງຄົນຍັງສົງໃສຢູ່.
18ພຣະເຢຊູຈຶ່ງສະເດັດມາໃກ້ແລ້ວຊົງກ່າວກັບເຂົາວ່າ, "ອຳນາດທັງໝົດໃນສະຫວັນແລະທີ່
ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ. 19ເຫດສັນນັ້ນພວກທ່ານຈົ່ງໄປ[ກ] ຈົ່ງເຮັດໃຫ້ຄົນ
ທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ, ພຣະບຸດ, ແລະ
ພຣະວິນຍານອັນບໍລິສຸດ. 20ສັ່ງສອນເຂົາໃຫ້ຖືກຮັກສາສາລະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້
ແລ້ວນັ້ນ ນີ້ແຫລະ, ເຮົາຢູ່ກັບທ່ານທັງຫລາຍທຸກໆ ວັນຈົນໝົດກັບ.

* * *

[ກ]ສຳເນົາຕົ້ນສະບັບບາງສະບັບ ແທນທີ່ຈະເວົ້າວ່າ "ເຫດສັນນັ້ນພວກທ່ານຈົ່ງໄປ" ກໍມີຄຳວ່າ "ເຫດສັນ-
ນັ້ນໃນຂະນະທີ່ພວກທ່ານໄປນັ້ນ..."

# ຂ່າວປະເສີດເລື່ອງພຣະເຢຊູຄຣິດ
## ຮຽບຮຽງໂດຍ
# ມາຣະໂກ

## ບົດທີ 1
### ການເທດສະໜາຂອງໂຢຮັນບັບຕິສະໂຕ

*(ມທ 3:1-12; ລກ 3:1-18; ຢຮ 1:19-28)*

1ຕົ້ນເດີມຂ່າວປະເສີດເລື່ອງ ພຣະເຢຊູຄຣິດ,[ກ] 2ກໍແມ່ນຕາມທີ່ໄດ້ຂຽນໄວ້ໃນໜັງສືຂອງ ເອ-
ຊາຢາຜູ້ປະກາດພຣະທຳວ່າ,

"ຈົ່ງເບິ່ງ, ເຮົາໄດ້ໃຊ້ຜູ້ຮັບໃຊ້ຂອງເຮົາໄປລ່ວງໜ້າທ່ານ,
ຜູ້ນັ້ນຈະຈັດແຈງທາງຂອງທ່ານໄວ້."
3 "ແມ່ນສຽງຂອງຜູ້ຮ້ອງໃນປ່າວ່າ
'ຈົ່ງຈັດແຈງທາງແຫ່ງ ພຣະຜູ້ເປັນເຈົ້າ
ຈົ່ງເຮັດທົ່ນທາງຂອງພຣະອົງໃຫ້ຊື່ໄປ'."

4ໂຢຮັນ ບັບຕິສະໂຕ ໄດ້ປະກົດຕົວໃນປ່າ ແລະໄດ້ປະກາດສິນບັບຕິສະມາກ່ຽວເລື່ອງການຖິ້ມ
ໃຈເກົ່າເອົາໃຈໃໝ່ສຳລັບການຍົກບາບໂທດເສຍ. 5ຄົນທົ່ວແຂວງ ຢູດາຍ ກັບຊາວກຸງ ເຢຣູຊາ-
ເລັມ ທັງໝົດ ໄດ້ພາກັນອອກໄປຫາ ໂຢຮັນ ສາລະພາບຄວາມຜິດບາບຂອງຕົນ ແລ້ວໄດ້ຮັບ
ບັບຕິສະມາຈາກ ໂຢຮັນ ໃນແມ່ນ້ຳຢໍແດນ. 6ໂຢຮັນ ແຕ່ງກາຍດ້ວຍຜ້າຂົນໂອດໂອ ໃຊ້ສາຍໜັງ
ຮັດແອວ ແລະກິນຕັກແຕນກັບນ້ຳເຜິ້ງປ່າເປັນອາຫານ. 7ເພິ່ນໄດ້ປ່າວປະກາດວ່າ, "ຈະມີຜູ້ມີ
ລິດກວ່າເຮົາຜູ້ໜຶ່ງມາພາຍຫລັງເຮົາ ຊຶ່ງເຮົາບໍ່ສົມຄວນຈະກົ້ມລົງແກ້ສາຍຮັດເກີບຂອງເພິ່ນ.
8ຝ່າຍເຮົາໃຫ້ເຈົ້າທັງຫລາຍຮັບບັບຕິສະມາດ້ວຍນ້ຳ ແຕ່ສ່ວນຜູ້ນັ້ນຈະໃຫ້ເຈົ້າທັງຫລາຍຮັບບັບ-
ຕິສະມາດ້ວຍ ພຣະວິນຍານບໍລິສຸດ."

### ພຣະເຢຊູຊົງຮັບບັບຕິສະມາ

*(ມທ 3:13-17; ລກ 3:21-22)*

9ຕໍ່ມາ ພຣະເຢຊູ ສະເດັດມາຈາກ ນາຊາເຣັດ ແຂວງ ຄາລິເລ ແລະໄດ້ຊົງຮັບບັບຕິສະມາຈາກ
ໂຢຮັນ ໃນແມ່ນ້ຳຢໍແດນ. 10ພໍພຣະອົງສະເດັດຂຶ້ນຈາກນ້ຳ ໃນທັນໃດນັ້ນກໍຊົງເຫັນທ້ອງຟ້າກຳ-
ລັງແຫວກອອກ ແລະ ພຣະວິນຍານ ເໝືອນດັ່ງນົກເຂົາສະເດັດລົງມາສູ່ພຣະອົງ. 11ແລ້ວມີພຣະ-
ສຸລະສຽງມາຈາກຟ້າສະຫວັນວ່າ, "ທ່ານເອີຍ, ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈຫລາຍ
ໃນທ່ານ."

[ກ]ບາງສະບັບມີອີກ "ພຣະບຸດຂອງພຣະເຈົ້າ"

## ມານທົດລອງພຣະເຢຊູ

*(ມທ 4:1-11; ລກ 4:1-13)*

[12]ໃນທັນໃດນັ້ນ ພຣະວິນຍານ ໄດ້ຊົງບັງຄັບພຣະອົງໃຫ້ສະເດັດເຂົ້າໄປໃນປ່າກັນດານ. [13]ທີ່
ນັ້ນ ຊາຕານ ໄດ້ທົດລອງພຣະອົງເຖິງສີ່ສິບວັນ ພຣະອົງຊົງຢູ່ຖ້າມກາງສັດປ່າ ແລະມີພວກເທ-
ວະດາມາບົວລະບັດພຣະອົງ.

## ພຣະເຢຊູຊົງເອີ້ນຊາວຫາປາສີ່ຄົນ

*(ມທ 4:12-22; ລກ 4:14-15; 5:1-11)*

[14]ຄັນໂຢຮັນຖືກຈັບແລ້ວ ພຣະເຢຊູໄດ້ສະເດັດໄປຍັງແຂວງຄາລີເລ ຊົງປະກາດຂ່າວປະ-
ເສີດເລື່ອງພຣະເຈົ້າ. [15]ແລະຊົງບອກວ່າ, "ເວລາກຳນົດມາເຖິງແລ້ວ ລາຊະອານາຈັກຂອງ
ພຣະເຈົ້າໄດ້ມາໃກ້ແລ້ວ ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ແລະເຊື່ອໃນຂ່າວປະເສີດ." [16]ເມື່ອພຣະອົງ
ສະເດັດໄປຕາມແຄມທະເລສາບຄາລີເລ ກໍທອດພຣະເນດເຫັນຊີໂມນ ແລະອັນເດອານ້ອງຊາຍ
ຂອງຊີໂມນກຳລັງຖິ້ມມອງລົງນ້ຳເພາະວ່າເຂົາເປັນຊາວຫາປາ. [17]ພຣະເຢຊູຊົງບອກເຂົາວ່າ,
"ຈົ່ງຕາມເຮົາມາແລະເຮົາຈະບັນດານໃຫ້ເຈົ້າກາຍເກີດເປັນຜູ້ຫາຄົນ." [18]ທັນທີນັ້ນເຂົາກໍປະມອງ
ຂອງເຂົາຕາມພຣະອົງໄປ. [19]ເມື່ອສະເດັດໄປອີກໜ້ອຍໜຶ່ງ ພຣະອົງກໍທອດພຣະເນດເຫັນຢາ-
ໂກໂບລູກຊາຍຂອງເຊເບດາຍ ກັບໂຢຮັນນ້ອງຊາຍຂອງລາວກຳລັງຝຸງມອງຢູ່ໃນເຮືອ. [20]ໃນ
ທັນໃດນັ້ນພຣະອົງໄດ້ຊົງເອີ້ນເອົາເຂົາ ເຂົາຈຶ່ງປະເຊເບດາຍພໍ່ຂອງເຂົາກັບລູກຈ້າງໄວ້ໃນເຮືອ
ແລະໄດ້ຕາມພຣະອົງໄປ.

## ຊາຍທີ່ມີຜີຖ່ອຍຮ້າຍສິງ

*(ລກ 4:31-37)*

[21]ພຣະອົງໄດ້ສະເດັດເຂົ້າໄປໃນເມືອງກາເປນາອູມ ພ້ອມກັບພວກຂອງພຣະອົງແລະເມື່ອ
ເຖິງວັນສະບາໂຕ ພຣະອົງໄດ້ສະເດັດເຂົ້າໄປສັ່ງສອນໃນໂຮງທຳມະເທດສະໜາ. [22]ຄົນທັງ-
ຫລາຍກໍປະຫລາດໃຈໃນການສອນຂອງພຣະອົງ ເພາະວ່າພຣະອົງຊົງສັ່ງສອນເຂົາເໝືອນຜູ້ມີ
ສິດອຳນາດ ບໍ່ເໝືອນພວກນັກທຳ. [23]ຂະນະນັ້ນໃນໂຮງທຳມີຄົນທີ່ມີຜີຖ່ອຍຮ້າຍສິງຢູ່ ແລະໄດ້
ຮ້ອງຂຶ້ນວ່າ, [24]"ເຢຊູໄທນາຊາເຣັດເອີຍ, ທ່ານມາຫຍຸ້ງກ່ຽວກັບພວກເຮົາເຮັດຫຍັງ ທ່ານມາ
ທຳລາຍພວກເຮົາຫລື ທ່ານແມ່ນຜູ້ໃດພວກເຮົາກໍຮູ້ແລ້ວ ທ່ານຄືຜູ້ບໍລິສຸດຂອງພຣະເຈົ້າ."
[25]ພຣະເຢຊູຊົງຫ້າມມັນວ່າ, "ມິດແມ ອອກຈາກຄົນນີ້ເສຍ." [26]ແລະເມື່ອຜີຖ່ອຍຮ້າຍເຮັດໃຫ້ຄົນ
ນັ້ນຊັກແລະຮ້ອງສຽງດັງແລ້ວ ມັນກໍອອກຈາກລາວໄປ. [27]ຄົນທັງປວງກໍງຶດປະຫລາດໃຈຫລາຍ
ຈຶ່ງຖາມກັນວ່າ, "ການນີ້ເປັນຢ່າງໃດໜໍ ຄົງເປັນຄວາມສັ່ງສອນໃໝ່ແທ້ ທ່ານສັ່ງຜີຖ່ອຍຮ້າຍ
ດ້ວຍລິດອຳນາດແລະມັນກໍຍອມຟັງ." [28]ເມື່ອນັ້ນກິຕິສັບຂອງພຣະອົງກໍຊ່າອອກໄປທົ່ວເຂດທີ່
ອ້ອມແຂວງຄາລີເລນັ້ນ.

## ພຣະເຢຊູຊົງໂຜດຫລາຍຄົນໃຫ້ດີພະຍາດ

*(ມທ 8:14-17; ລກ 4:37-41)*

[29]ເມື່ອສະເດັດອອກຈາກໂຮງທຳແລ້ວ ພຣະອົງກັບພວກຂອງພຣະອົງຈຶ່ງເຂົ້າໄປໃນເຮືອນ

ຂອງຊີໂມນ ແລະ ອັນເດອາ ພ້ອມກັບຢາໂກໂບ ແລະ ໂຢຮັນ. [30]ແມ່ເມຍຂອງຊີໂມນນອນໄຂ້ຢູ່
ໃນທັນໃດນັ້ນເຂົາຈຶ່ງມາທູນພຣະອົງໃຫ້ຊາບດ້ວຍເລື່ອງຂອງນາງ. [31]ແລ້ວພຣະອົງກໍສະເດັດໄປ
ຈັບມືນາງໃຫ້ລຸກຂຶ້ນ ແລະອາການໄຂ້ກໍຫາຍ ນາງຈຶ່ງບົວລະບັດພຣະອົງພ້ອມທັງພວກຂອງ
ພຣະອົງ. [32]ແລະພໍຕາເວັນຕົກ ເມື່ອຄໍ່າແລ້ວເຂົາໄດ້ພາບັນດາຄົນເຈັບປ່ວຍແລະທີ່ມີຜີຮ້າຍສິງ
ມາຫາພຣະອົງ. [33]ແລະຄົນທັງເມືອງກໍພາກັນມາອັ່ງອໍຢູ່ໜ້າປະຕູ. [34]ພຣະອົງຈຶ່ງຊົງໂຜດຄົນທີ່
ເຈັບປ່ວຍດ້ວຍພະຍາດຕ່າງໆ ໃຫ້ດີຫລາຍຄົນ ແລະຊົງຂັບໄລ່ຜີຮ້າຍຫລາຍໂຕອອກເສຍ ສ່ວນ
ຜີຮ້າຍເຫລົ່ານັ້ນພຣະອົງບໍ່ຊົງອະນຸຍາດໃຫ້ປາກເພາະວ່າມັນຮູ້ຈັກພຣະອົງ.

## ພຣະເຢຊູສະເດັດອອກໄປປະກາດ

*(ລກ 4:42-44)*

[35]ກ່ອນຮຸ່ງເຊົ້າເວລາຍັງມືດຢູ່ ພຣະອົງໄດ້ຊົງລຸກຂຶ້ນສະເດັດອອກໄປຍັງປ່າບ່ອນສະຫງັດ
ແລະຊົງອ້ອນວອນຢູ່ທີ່ນັ້ນ. [36]ຝ່າຍຊີໂມນ ແລະພວກທີ່ຢູ່ດ້ວຍກັນກໍຕາມຫາພຣະອົງ. [37]ເມື່ອພົບ
ແລ້ວເຂົາຈຶ່ງທູນວ່າ, "ຄົນທັງຫລາຍກໍຊອກຫາທ່ານຢູ່." [38]ພຣະອົງຊົງຕອບເຂົາວ່າ, "ໃຫ້ເຮົາ
ທັງຫລາຍໄປໃນເຂດບ້ານເມືອງໃກ້ຄຽງ ເພື່ອເຮົາຈະປະກາດທີ່ນັ້ນດ້ວຍ ເພາະເຫດການນີ້
ແຫລະ, ເຮົາຈຶ່ງໄດ້ອອກມາ." [39]ພຣະອົງໄດ້ສະເດັດໄປປະກາດໃນໂຮງທຳຂອງເຂົາຕະຫລອດ
ທົ່ວແຂວງຄາລີເລ ແລະໄດ້ຂັບໄລ່ຜີຫລາຍໂຕອອກເສຍ.

## ພຣະເຢຊູຊົງໂຜດຄົນຂີ້ທູດໃຫ້ດີສະອາດ

*(ມທ 8:1-4; ລກ 5:12-16)*

[40]ຄົນຂີ້ທູດຜູ້ໜຶ່ງໄດ້ມາຫາພຣະອົງຂໍໃຫ້ພຣະອົງຊົງໂຜດຊ່ອຍ ລາວໄດ້ຄຸເຂົ່າລົງທູນວ່າ, "ຖ້າ
ທ່ານພໍໃຈກໍອາດຈະເຮັດໃຫ້ຂ້ານ້ອຍດີສະອາດໄດ້." [41]ພຣະເຢຊູຈຶ່ງຊົງມີພຣະໄທສົງສານຄົນນັ້ນ
ແລ້ວຊົງຢຽດພຣະຫັດອອກຖືກລາວຊົງກ່າວວ່າ, "ເຮົາພໍໃຈແລ້ວ ຈົ່ງດີສະອາດເສຍ." [42]ແລະໃນ
ທັນໃດນັ້ນພະຍາດຂີ້ທູດກໍຫາຍ ແລະຄົນນັ້ນກໍສະອາດ. [43]ແລ້ວພຣະອົງໄດ້ຊົງສັ່ງຄົນນັ້ນຢ່າງ
ເຂັ້ມແຂງໃຫ້ໜີໄປທັນທີ, [44]ໂດຍຊົງບອກວ່າ, "ເຈົ້າຈົ່ງລະວັງ ຢ່າບອກສິ່ງໃດໃຫ້ຜູ້ໃດຟັງ ແຕ່
ຈົ່ງໄປສະແດງຕົວຕໍ່ປະໂລຫິດ ແລະຖວາຍເຄື່ອງບູຊາຕາມທີ່ໂມເຊໄດ້ສັ່ງໄວ້ເພື່ອເປັນຫລັກຖານ
ຕໍ່ເຂົາວ່າເຈົ້າດີສະອາດແລ້ວ." [45]ແຕ່ຄົນນັ້ນ ເມື່ອອອກໄປແລ້ວກໍຕັ້ງຕົ້ນປ່າວຮ້ອງຢ່າງຫລວງ-
ຫລາຍໃຫ້ເລື່ອງນັ້ນຊ່າລືໄປ ຈົນພຣະອົງຈະສະເດັດເຂົ້າໄປໃນເມືອງໂດຍເປີດເຜີຍຕໍ່ໄປບໍ່ໄດ້
ແຕ່ປະທັບຢູ່ພາຍນອກໃນບ່ອນສະຫງັດຕ່າງໆ ແລະມີຄົນຈາກທຸກທີ່ທຸກບ່ອນມາຫາພຣະອົງ.

# ບົດທີ 2

## ພຣະເຢຊູຊົງໂຜດຄົນເປ້ຍໃຫ້ດີປົກກະຕິ

*(ມທ 9:1-8; ລກ 5:17-26)*

[1]ຄັນລ່ວງໄປບໍ່ເທິງ ພຣະອົງໄດ້ສະເດັດມາໃນເມືອງກາເປນາອູມອີກ ແລະຄົນທັງຫລາຍໄດ້
ຍິນຂ່າວວ່າພຣະອົງຊົງປະທັບຢູ່ເຮືອນ. [2]ຂະນະນັ້ນມີຄົນຫລວງຫລາຍມາໂຮມກັນຈົນບໍ່ມີບ່ອນຢູ່
ແມ່ນຈະເຂົ້າໄປໃກ້ປະຕູກໍບໍ່ໄດ້ ແລ້ວພຣະອົງຊົງກ່າວພຣະທຳໃຫ້ເຂົາຟັງ. [3]ສ່ວນຄົນຈຳພວກ

ໜຶ່ງໄດ້ນຳຄົນເປ້ຍຜູ້ໜຶ່ງມາຫາພຣະອົງມີສີ່ຄົນຫາມ. 4ເມື່ອເຂົາເຂົ້າໄປເຖິງພຣະອົງບໍ່ໄດ້ເພາະ
ຄົນຫລາຍ ເຂົາຈຶ່ງຮື້ຫລັງຄາຊື່ບ່ອນພຣະອົງປະທັບນັ້ນ ເມື່ອຮື້ເປັນປ່ອງແລ້ວ ເຂົາກໍຢ່ອນບ່ອນ
ນອນທີ່ຄົນເປ້ຍນອນຢູ່ນັ້ນລົງ. 5ເມື່ອພຣະເຢຊູຊົງເຫັນຄວາມເຊື່ອຂອງເຂົາ ກໍຊົງກ່າວແກ່ຄົນ
ເປ້ຍນັ້ນວ່າ, “ລູກເອີຍ, ຜິດບາບຂອງເຈົ້າໄດ້ຮັບອະໄພແລ້ວ.” 6ແຕ່ມີພວກນັກທຳບາງຄົນນັ່ງຢູ່
ທີ່ນັ້ນໄດ້ຄຶດໃນໃຈວ່າ, 7“ເປັນຫຍັງຄົນນີ້ຈຶ່ງເວົ້າແນວນັ້ນ ເປັນການໝິ່ນປະໝາດພຣະເຈົ້າ ແທ້
ໃຜຈະຍົກຄວາມຜິດບາບໄດ້ ເວັ້ນແຕ່ພຣະເຈົ້າເທົ່ານັ້ນ.” 8ແລະໃນທັນໃດນັ້ນ ເມື່ອພຣະເຢຊູ
ຊົງຊາບໃນພຣະໄທວ່າເຂົາກຳລັງຄຶດໃນໃຈຢ່າງນັ້ນ ຈຶ່ງຊົງກ່າວແກ່ເຂົາວ່າ, “ເຫດສັນໃດທ່ານ
ທັງຫລາຍຈຶ່ງຄຶດໃນໃຈຢ່າງນີ້. 9ທີ່ຈະບອກແກ່ຄົນເປ້ຍນັ້ນວ່າ, ‘ຜິດບາບຂອງເຈົ້າໄດ້ຮັບອະໄພ
ແລ້ວ’ ຫລືຈະບອກວ່າ ‘ຈົ່ງລຸກຂຶ້ນເອົາບ່ອນນອນຂອງເຈົ້າຍ່າງໄປ’ ອັນໃດຈະງ່າຍກວ່າກັນ.
10ແຕ່ເພື່ອທ່ານທັງຫລາຍຈະໄດ້ຮູ້ວ່າ ບຸດມະນຸດມີສິດອຳນາດໃນໂລກໃຫ້ອະໄພຄວາມຜິດບາບ
ໄດ້” ພຣະອົງຈຶ່ງຊົງກ່າວແກ່ຄົນເປ້ຍນັ້ນວ່າ, 11“ເຮົາສັ່ງເຈົ້າ ຈົ່ງລຸກຂຶ້ນຍົກເອົາບ່ອນນອນຂອງ
ເຈົ້າໄປບ້ານເສຍ.” 12ຄົນເປ້ຍກໍລຸກຂຶ້ນຍົກເອົາບ່ອນນອນຂອງຕົນອອກໄປຕໍ່ໜ້າຄົນທັງປວງ
ທັນທີ ເຂົາທັງປວງກໍງຶດປະຫລາດໃຈຫລາຍຈຶ່ງສັນລະເສີນພຣະເຈົ້າ ແລະເວົ້າວ່າ, “ເຮົາບໍ່ເຄີຍ
ເຫັນຢ່າງນີ້ຈັກເທື່ອ.”

## ພຣະເຢຊູຊົງເອີ້ນເລວີ

*(ມທ 9:9-13; ລກ 5:27-32)*

13ຝ່າຍພຣະອົງໄດ້ສະເດັດອອກໄປຕາມແຄມທະເລສາບອີກ ປະຊາຊົນທັງປວງກໍມາຫາ
ພຣະອົງ ພຣະອົງໄດ້ຊົງສັ່ງສອນເຂົາ. 14ເມື່ອພຣະອົງກຳລັງສະເດັດໄປນັ້ນ ກໍຊົງເຫັນເລວີລູກ
ອາລາຟາຍນັ່ງຢູ່ດ່ານພາສີ ພຣະອົງຈຶ່ງຊົງກ່າວແກ່ທ່ານວ່າ, “ຈົ່ງຕາມເຮົາມາ” ເພິ່ນກໍລຸກຂຶ້ນ
ຕາມພຣະອົງໄປ. 15ເມື່ອພຣະອົງປະທັບສະເຫວີຍອາຫານຢູ່ໃນເຮືອນຂອງເລວີ ມີຄົນເກັບພາສີ
ແລະຄົນນອກສິນທຳຫລາຍຄົນ ນັ່ງຮ່ວມໂຕະກັບພຣະເຢຊູ ແລະພວກສິດຂອງພຣະອົງເພາະມີ
ຄົນຕິດຕາມພຣະອົງໄປຫລາຍ. 16ແລະມີພວກນັກທຳຝ່າຍຟາຣີຊາຍ ເມື່ອເຫັນພຣະອົງຊົງສະ-
ເຫວີຍອາຫານກັບຄົນນອກສິນທຳ ແລະຄົນເກັບພາສີ ໄດ້ທ້ວງຖາມພວກສິດຂອງພຣະອົງວ່າ,
“ເປັນຫຍັງໝໍ ເພິ່ນຈຶ່ງຍອມຮັບປະທານຮ່ວມກັບຄົນນອກສິນທຳແລະຄົນເກັບພາສີ.” 17ຄັນ
ພຣະເຢຊູຊົງໄດ້ຍິນດັ່ງນັ້ນ ກໍຊົງກ່າວແກ່ເຂົາວ່າ, “ຄົນທີ່ສະບາຍບໍ່ຕ້ອງການໝໍຢາ ແຕ່ຄົນເຈັບ
ຕ້ອງການໝໍ ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທຳ ແຕ່ມາເອີ້ນເອົາຄົນນອກສິນທຳ.”

## ບັນຫາການຖືສິນອົດອາຫານ

*(ມທ 9:14-17; ລກ 5:33-39)*

18ມີພວກສິດຂອງໂຢຮັນ ແລະພວກຟາຣີຊາຍກຳລັງຖືສິນອົດອາຫານ ແລ້ວມີບາງຄົນມາທູນ
ພຣະອົງວ່າ, “ເຫດສັນໃດພວກສິດຂອງໂຢຮັນ ແລະສິດຂອງຟາຣີຊາຍເຄີຍຖືສິນອົດອາຫານ
ແຕ່ພວກສິດຂອງທ່ານບໍ່ຖື.” 19ພຣະເຢຊູຊົງຕອບເຂົາວ່າ, “ເມື່ອເຈົ້າບ່າວຍັງຢູ່ນຳເຂົາ ພວກ
ເພື່ອນຂອງເຈົ້າບ່າວນັ້ນຈະຖືສິນອົດອາຫານຢູ່ບໍ່ໄດ້ຕີ້ ເຈົ້າບ່າວຢູ່ນຳເຂົານານເທົ່າໃດ ເຂົາຈະຖື
ສິນອົດອາຫານນານເທົ່ານັ້ນບໍ່ໄດ້. 20ແຕ່ຈະມີວັນໜຶ່ງເຈົ້າບ່າວຕ້ອງຖືກຍົກຍ້າຍຈາກເຂົາໄປ

ເມື່ອນັ້ນແຫລະ ເຂົາຈຶ່ງຈະຖືສິນອົດອາຫານ. 21“ບໍ່ທ່ອນມີຜູ້ໃດເອົາຕ່ອນຜ້າໃໝ່ມາຕາບເສື້ອເກົ່າ
ຖ້າເຮັດຢ່າງນັ້ນ ເມື່ອຕ່ອນຜ້າໃໝ່ນັ້ນຫົດກໍຈະເຮັດໃຫ້ເສື້ອເກົ່ານັ້ນຂາດ ແລະບ່ອນຂາດນັ້ນກໍ
ຈະກວ້າງອອກອີກ. 22ແລະບໍ່ມີຜູ້ໃດເອົາເຫລົ້າແວງໃໝ່ມາໃສ່ໄວ້ໃນຖົງໜັງເກົ່າ ຖ້າເຮັດຢ່າງນັ້ນ
ເຫລົ້າແວງໃໝ່ກໍຈະເຮັດໃຫ້ຖົງໜັງນັ້ນຂາດໄປ ທັງເຫລົ້າແວງແລະຖົງໜັງກໍຈະເສຍໄປນຳກັນ
ແຕ່ເຫລົ້າແວງໃໝ່ຕ້ອງໃສ່ໄວ້ໃນຖົງໜັງໃໝ່.”

## ບັນຫາການຖືກົດວັນຊະບາໂຕ

*(ມທ 12:1-8; ລກ 6:1-5)*

23ຢູ່ມາໃນວັນຊະບາໂຕວັນໜຶ່ງ ພຣະອົງກຳລັງສະເດັດຜ່ານທົ່ງນາໄປ ແລະເມື່ອພວກສິດ
ຂອງພຣະອົງຍ່າງຕິດຕາມໄປ ກໍຕັ້ງຕົ້ນເດັດເອົາຮວງເຂົ້າໄປນຳ. 24ຝ່າຍພວກຟາຣີຊາຍຈຶ່ງທູນ
ພຣະອົງວ່າ, “ເບິ່ງແມ, ເປັນແນວໃດພວກສິດຂອງທ່ານຈຶ່ງເຮັດຜິດຕໍ່ກົດຂອງວັນຊະບາໂຕ.”
25ພຣະອົງຊົງຕອບເຂົາວ່າ, “ພວກທ່ານຍັງບໍ່ໄດ້ອ່ານຈັກເທື່ອຫລື ຊຶ່ງດາວິດໄດ້ເຮັດເມື່ອອຶດ
ຢາກຂາດອາຫານ ທັງທ່ານແລະພັກພວກຂອງຕົນ. 26ຄືຄາວເມື່ອອາບີອາທາເປັນມະຫາປະ-
ໂລຫິດ ດາວິດໄດ້ເຂົ້າໄປໃນທີ່ສະຖິດຂອງພຣະເຈົ້າ ແລະຮັບປະທານເຂົ້າຈີ່ທີ່ຕັ້ງຖວາຍຕໍ່
ພຣະພັກທີ່ພຣະບັນຍັດຫ້າມບໍ່ໃຫ້ໃຜກິນ ເວັ້ນແຕ່ພວກປະໂລຫິດເທົ່ານັ້ນ ແລະຊ້ຳຍັງຍື່ນໃຫ້ພັກ
ພວກຮັບປະທານເໝືອນກັນ.” 27ພຣະອົງຊົງກ່າວແກ່ເຂົາວ່າ, “ວັນຊະບາໂຕຊົງຕັ້ງໄວ້ເພື່ອມະ-
ນຸດ ບໍ່ແມ່ນຊົງສ້າງມະນຸດໄວ້ສຳລັບວັນຊະບາໂຕ. 28ເພາະເຫດນັ້ນບຸດມະນຸດຈຶ່ງເປັນເຈົ້າຂອງ
ວັນຊະບາໂຕເໝືອນກັນ.

# ບົດທີ 3

## ຊາຍມືລີບເບື້ອງໜຶ່ງ

*(ມທ 12:9-14; ລກ 6:6-11)*

1ແລ້ວພຣະອົງໄດ້ສະເດັດກັບເຂົ້າໂຮງທຳມະເທດສະໜາອີກ ແລະທີ່ນັ້ນມີຄົນໜຶ່ງມືເບື້ອງໜຶ່ງ
ລີບ. 2ເຂົາຊອມເບິ່ງວ່າພຣະອົງຈະຊົງໂຜດໃຫ້ຄົນນັ້ນດີໃນວັນຊະບາໂຕຫລືເພື່ອເຂົາຈະຟ້ອງ
ພຣະອົງໄດ້. 3ສ່ວນພຣະອົງຊົງກ່າວແກ່ຄົນມືລີບວ່າ, “ຈົ່ງລຸກຂຶ້ນມາຢືນຂ້າງໜ້າສາ.” 4ແລ້ວ
ພຣະອົງຊົງຖາມເຂົາວ່າ, “ໃນວັນຊະບາໂຕຄວນຈະເຮັດການດີຫລືຄວນຈະເຮັດການຮ້າຍ ຈະ
ເອົາຊີວິດໄວ້ຫລືຈະຕັດຊີວິດເສຍ” ແຕ່ເຂົາກໍມິດຢູ່. 5ເມື່ອທອດພຣະເນດເບິ່ງອ້ອມເຂົາດ້ວຍ
ຄວາມເຄືອງພຣະໄທ ພຣະອົງກໍເປັນທຸກພຣະໄທເພາະໃຈເຂົາແຂງກະດ້າງປົກຕັນ ແລ້ວພຣະ-
ອົງຊົງກ່າວແກ່ຄົນມືລີບນັ້ນວ່າ, “ຈົ່ງຢຽດມືອອກ” ຄົນນັ້ນກໍຢຽດມືອອກ ແລະມືຂອງຕົນກໍດີເປັນ
ປົກກະຕິ. 6ຝ່າຍພວກຟາຣີຊາຍຈຶ່ງໄດ້ອອກໄປ ແລະໃນທັນໃດນັ້ນເຂົາໄດ້ປຶກສາກັນກັບພັກ
ພວກຂອງເຮໂຣດເຖິງເລື່ອງພຣະອົງວ່າ ຈະເຮັດຢ່າງໃດຈຶ່ງຈະຂ້າພຣະອົງໄດ້.

## ປະຊາຊົນທັງຫລາຍແຄມຝັ່ງທະເລສາບ

7ຝ່າຍພຣະເຢຊູສະເດັດອອກຈາກທີ່ນັ້ນໄປສູ່ທະເລສາບ ພ້ອມກັບພວກສິດຂອງພຣະອົງ
ແລະຄົນເປັນຈຳນວນຫລາຍຈາກແຂວງຄາລີເລໄດ້ຕາມໄປ ທັງຈາກແຂວງຢູດາຍ, 8ຈາກກຸງ

ເຢຣູຊາເລັມ, ຈາກເມືອງອີດູມາຍ, ຈາກແມ່ນ້ຳຢໍແດນຟາກຕາເວັນອອກ, ແລະຈາກອ້ອມແອ້ມ
ເມືອງຕີເຣກັບຊີໂດນ ພວກເຫລົ່ານີ້ໄດ້ມາຫາພຣະອົງ ເພາະເຂົາໄດ້ຍິນເຖິງສິ່ງທີ່ພຣະອົງຊົງ
ກະທຳຢູ່ນັ້ນ. 9ພຣະອົງຈຶ່ງຊົງສັ່ງພວກສິດໃຫ້ເອົາເຮືອນ້ອຍມາຄອຍຮັບພຣະອົງ ເພື່ອບໍ່ໃຫ້ປວງ
ຊົນບຽດພຣະອົງ. 10ເພາະວ່າພຣະອົງໄດ້ຊົງໂຜດຫລາຍຄົນໃຫ້ດີພະຍາດ ຈົນບັນດາຜູ້ມີພະຍາດ
ຕ່າງໆ ໄດ້ບຽດກັນເຂົ້າຫາພຣະອົງເພື່ອຈະຈັບບາຍພຣະອົງ. 11ແລະຜີຖ່ອຍຮ້າຍທີ່ສິງຢູ່ໃນຄົນ
ຫລາຍຄົນນັ້ນ ເມື່ອໄດ້ເຫັນພຣະອົງກໍໄດ້ໝູບລົງຂາບພຣະອົງແລ້ວຮ້ອງຂຶ້ນວ່າ, "ທ່ານເປັນ
ພຣະບຸດຂອງພຣະເຈົ້າ." 12ຝ່າຍພຣະອົງຈຶ່ງຊົງສັ່ງຫ້າມຢ່າງເດັດຂາດ ບໍ່ໃຫ້ມັນປະກາດພຣະ-
ນາມຂອງພຣະອົງ.

## ພຣະເຢຊູຊົງເລືອກຕັ້ງສາວົກສິບສອງຄົນ

*(ມທ 10:1-4; ລກ 6:12-16)*

13ແລ້ວພຣະອົງໄດ້ສະເດັດຂຶ້ນພູເຂົາ ແລະພໍພຣະໄທຈະເອີ້ນຜູ້ໃດມາພຣະອົງກໍຊົງເອີ້ນຜູ້ນັ້ນ
ແລ້ວເຂົາກໍໄດ້ມາຫາພຣະອົງ. 14ພຣະອົງຊົງຕັ້ງສິດສິບສອງຄົນໄວ້ [ຈຶ່ງຊົງເອີ້ນເຂົາວ່າອັກຄະ
ສາວົກ] ໃຫ້ຢູ່ກັບພຣະອົງເພື່ອຊົງໃຊ້ເຂົາໄປປະກາດ. 15ແລະຊົງໃຫ້ມີອຳນາດຂັບໄລ່ຜີອອກໄດ້.
16[ສິບສອງຄົນນີ້ພຣະອົງໄດ້ຊົງຕັ້ງໄວ້] ຄືຊີໂມນທີ່ພຣະອົງຊົງປະທານຊື່ອີກວ່າເປໂຕ. 17ແລະ
ຢາໂກໂບລູກເຊເບດາຍ ກັບໂຢຮັນນ້ອງຊາຍຂອງລາວ (ທັງສອງຄົນນີ້ ພຣະອົງຊົງປະທານຊື່
ອີກວ່າ ໂບອະເນເຄແປວ່າຄົນໃຈຮຸນແຮງ), 18ອັນເດອາ, ຟີລິບ, ບາຣະໂທໂລມາຍ, ມັດທາຍ,
ໂທມາ, ຢາໂກໂບລູກອາລາຟາຍ, ທາດາຍ, ຊີໂມນ ພັກຊາດນິຍົມ, 19ແລະຢູດາອິສະກາຣີອົດ
ຜູ້ໄດ້ທໍລະຍົດຕໍ່ພຣະອົງນັ້ນ.

## ພຣະເຢຊູກັບເບເອນເຊບຸບ

*(ມທ 12:22-32; ລກ 11:14-23; ລກ 12:10)*

20ແລ້ວພຣະອົງໄດ້ສະເດັດກັບຄືນທີ່ຢູ່ແລະປະຊາຊົນກໍມາອັ່ງອໍກັນ ຈົນພຣະເຢຊູກັບພວກ
ສາວົກຂອງພຣະອົງຮັບປະທານອາຫານບໍ່ໄດ້. 21ເມື່ອຍາດມິດຂອງພຣະອົງໄດ້ຍິນເຫດການນັ້ນ
ເຂົາກໍອອກໄປເພື່ອຈະຈັບພຣະອົງໄວ້ ເພາະເຂົາຄຶດວ່າເພິ່ນເສຍຈິດແລ້ວ. 22ພວກນັກທຳຊື່ງລົງ
ມາຈາກກຸງເຢຣູຊາເລັມໄດ້ກ່າວວ່າ, "ຜູ້ນີ້ມີຜີເບເອນເຊບຸບສິງຢູ່" ແລະ "ທີ່ເພິ່ນຂັບໄລ່ຜີອອກ
ໄດ້ກໍເພາະໃຊ້ອຳນາດນາຍຜີນັ້ນ." 23ຝ່າຍພຣະອົງຈຶ່ງຊົງເອີ້ນຄົນເຫລົ່ານັ້ນມາກ່າວແກ່ເຂົາເປັນ
ຄຳອຸປະມາວ່າ, "ຊາຕານຈະຂັບໄລ່ຕົວມັນເອງໃຫ້ອອກໄດ້ຢ່າງໃດ. 24ຖ້າອານາຈັກໃດເກີດ
ແຕກແຍກຈາກກັນແລ້ວ ອານາຈັກນັ້ນຈະຕັ້ງໝັ້ນຢູ່ບໍ່ໄດ້. 25ຖ້າຄົວເຮືອນໃດເກີດແຕກແຍກ
ຈາກກັນ ຄົວເຮືອນນັ້ນຈະຕັ້ງໝັ້ນຢູ່ບໍ່ໄດ້. 26ແລະຖ້າຊາຕານຈະຕໍ່ສູ້ກັບຕົວມັນເອງແລະແຕກ
ແຍກກັນ ມັນກໍຕັ້ງຢູ່ບໍ່ໄດ້ ມີແຕ່ຈະສູນຫາຍໄປ. 27ບໍ່ມີຜູ້ໃດອາດເຂົ້າໄປໃນເຮືອນຂອງຄົນແຂງ-
ແຮງ ແລະປຸ້ນເອົາຊັບໄດ້ ເວັ້ນແຕ່ຈະມັດຄົນແຂງແຮງນັ້ນໄວ້ເສຍກ່ອນ ແລ້ວຈຶ່ງຈະປຸ້ນເຮືອນ
ນັ້ນໄດ້. 28"ເຮົາບອກເຈົ້າທັງຫລາຍຕາມຄວາມຈິງວ່າ ຄວາມຜິດບາບທຸກຢ່າງກັບຄຳໝິ່ນປະ-
ໝາດທີ່ເຂົາກ່າວນັ້ນ ຈະຊົງໂຜດໃຫ້ອະໄພແກ່ມະນຸດໄດ້. 29ແຕ່ຖ້າຜູ້ໃດຈະກ່າວຄຳໝິ່ນປະມາດ
ຕໍ່ພຣະວິນຍານບໍລິສຸດ ຈະຊົງໂຜດໃຫ້ອະໄພແກ່ຜູ້ນັ້ນບໍ່ໄດ້ຈັກເທື່ອ ແຕ່ຜູ້ນັ້ນຈະມີໂທດຕະ-

ຫລອດໄປເປັນນິດ.” [30]ທີ່ຊົງກ່າວຢ່າງນັ້ນກໍເພາະເຂົາກ່າວວ່າ, “ເພິ່ນມີຜີຮ້າຍສິງຢູ່.”

## ມານດາແລະພວກນ້ອງຊາຍຂອງພຣະເຢຊູ

*(ມທ 12:46-50; ລກ 8:19-21)*

[31]ເວລານັ້ນມານດາແລະພວກນ້ອງຊາຍຂອງພຣະອົງມາຢືນຢູ່ຂ້າງນອກ ແລ້ວໃຊ້ຄົນເຂົ້າໄປ
ທູນເຊີນພຣະອົງ. [32]ແລະປະຊາຊົນກໍນັ່ງອ້ອມພຣະອົງ ເຂົາຈຶ່ງທູນພຣະອົງວ່າ, “ເບິ່ງແມ, ມານ
ດາແລະພວກນ້ອງຊາຍຂອງທ່ານມາຫາທ່ານ ຄອຍຢູ່ຂ້າງນອກ.” [33]ພຣະອົງຊົງຕອບເຂົາວ່າ,
“ໃຜເປັນມານດາແລະເປັນນ້ອງຊາຍຂອງເຮົາ.” [34]ພຣະອົງທອດພຣະເນດຄົນທັງປວງທີ່ນັ່ງຢູ່
ອ້ອມ ແລ້ວຊົງກ່າວວ່າ, “ນີ້ຄືມານດາແລະນ້ອງຊາຍຂອງເຮົາ. [35]ດ້ວຍວ່າຜູ້ໃດຈະເຮັດຕາມນ້ຳ
ພຣະໄທພຣະເຈົ້າ ຜູ້ນັ້ນແຫລະ, ເປັນນ້ອງຊາຍ, ນ້ອງສາວ, ແລະເປັນມານດາຂອງເຮົາ.”

# ບົດທີ 4

## ຄຳອຸປະມາເລື່ອງຜູ້ຫວ່ານພືດ

*(ມທ 13:1-9; ລກ 8:4-8)*

[1]ແລ້ວພຣະອົງຊົງຕັ້ງຕົ້ນສັ່ງສອນຢູ່ແຄມທະເລອີກ ປະຊາຊົນຫລວງຫລາຍໄດ້ພາກັນມາຫາ
ພຣະອົງ ຈົນພຣະອົງໄດ້ສະເດັດເຂົ້າປະທັບໃນເຮືອທີ່ທະເລ ແລະປະຊາຊົນຢູ່ບົກແຄມຝັ່ງ.
[2]ພຣະອົງໄດ້ຊົງສອນເຂົາຫລາຍປະການເປັນຄຳອຸປະມາ ແລະໃນການສອນນັ້ນພຣະອົງຊົງກ່າວ
ແກ່ເຂົາວ່າ, [3]“ຈົ່ງຟັງເທີນ ມີຄົນໜຶ່ງອອກໄປຫວ່ານພືດ. [4]ແລະເມື່ອກຳລັງຫວ່ານຢູ່ນັ້ນ ລາງ
ເມັດກໍຕົກຕາມທາງແລ້ວນົກກໍມາກິນເສຍ. [5]ລາງເມັດກໍຕົກໃສ່ບ່ອນຫີນຫລາຍດິນໜ້ອຍຈຶ່ງງອກ
ຂຶ້ນໂລດເພາະດິນບໍ່ເລິກ. [6]ເມື່ອຕາເວັນອອກມາກໍແຫ້ມ ຈຶ່ງຫ່ຽວແຫ້ງໄປເພາະບໍ່ມີຮາກ. [7]ລາງ
ເມັດກໍຕົກກາງພຸ່ມໜາມ ໜາມກໍປົ່ງຂຶ້ນຫຸ້ມຮັດເສຍ ຈຶ່ງບໍ່ເກີດຜົນ. [8]ລາງເມັດກໍຕົກໃສ່ດິນດີ
ແລ້ວງອກງາມຈະເລີນຂຶ້ນ ເກີດຜົນໄດ້ສາມສິບເທົ່າ, ຫົກສິບເທົ່າ, ແລະຮ້ອຍເທົ່າ.” [9]ແລ້ວພຣະອົງຊົງ
ກ່າວແກ່ເຂົາວ່າ, “ຜູ້ໃດມີຫູຢາກຟັງ ຈົ່ງຟັງເອົາ.”

## ຈຸດປະສົງຂອງຄຳອຸປະມາ

*(ມທ 13:10-17; ລກ 8:9-10)*

[10]ເມື່ອຫວ້າງຄົນແລ້ວ ພວກທີ່ຕິດຕາມພຣະອົງພ້ອມດ້ວຍສາວົກສິບສອງຄົນ ໄດ້ທູນຖາມ
ພຣະອົງເຖິງເລື່ອງຄຳອຸປະມາ. [11]ພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ, “ຂໍ້ຄວາມລັບເລິກເລື່ອງລາຊະ
ອານາຈັກຂອງພຣະເຈົ້າ ຊົງໂຜດໃຫ້ທ່ານທັງຫລາຍຮູ້ໄດ້ແຕ່ຝ່າຍຄົນນອກນັ້ນ ບັນດາຂໍ້ຄວາມ
ເຫລົ່ານີ້ຈະແຈ້ງໃຫ້ຮູ້ດ້ວຍຄຳອຸປະມາທັງໝົດ.

[12]ເພື່ອ,

‘ເຂົາເບິ່ງແລ້ວເບິ່ງອີກ ແຕ່ຈະບໍ່ໄດ້ເຫັນ
ແລະຟັງແລ້ວຟັງອີກ ແຕ່ບໍ່ເຂົ້າໃຈ
ຢ້ານວ່າເຂົາຈະຫັນກັບມາຫາພຣະເຈົ້າ
ແລະຈະຮັບການຊົງອະໄພ’

## ພຣະເຢຊູຊົງອະທິບາຍຄຳອຸປະມາເລື່ອງຄົນຫວ່ານພືດ

*(ມທ 13:18-23; ລກ 8:11-15)*

[13]ພຣະອົງຊົງກ່າວແກ່ເຂົາວ່າ, "ຄຳອຸປະມານັ້ນພວກທ່ານຍັງບໍ່ເຂົ້າໃຈຫລື ແລ້ວພວກທ່ານ
ຈະເຂົ້າໃຈຄຳອຸປະມາທັງປວງນັ້ນໄດ້ຢ່າງໃດ. [14]ຜູ້ຫວ່ານນັ້ນກໍຫວ່ານພຣະທຳ ເມັດທີ່ຕົກຕາມ
ທາງນັ້ນໄດ້ແກ່ພຣະທຳທີ່ຫວ່ານແລ້ວ. [15]ແລະເມື່ອບຸກຄົນໃດຟັງແລ້ວ ໃນທັນໃດນັ້ນຊາຕານກໍ
ມາຊິງເອົາພຣະທຳທີ່ຫວ່ານໃນໃຈເຂົານັ້ນໄປເສຍ. [16]ແລະເມັດທີ່ຕົກບ່ອນມີຫີນຫລາຍນັ້ນ ໄດ້-
ແກ່ຜູ້ທີ່ໄດ້ຍິນພຣະທຳກໍຮັບເອົາທັນທີດ້ວຍຄວາມຍິນດີ, [17]ແຕ່ບໍ່ມີຮາກໃນຕົວເອງ ຈຶ່ງທົນຢູ່ຊົ່ວ-
ຄາວ ແລະເມື່ອເກີດຄວາມຍາກລຳບາກຫລືການຂົ່ມເຫງເພາະພຣະທຳນັ້ນ ຕົນກໍທໍ້ຖອຍໃຈທັນ-
ທີ. [18]ແລະເມັດທີ່ຕົກກາງພຸ່ມໜາມໄດ້ແກ່ຜູ້ທີ່ໄດ້ຍິນພຣະທຳ. [19]ແລ້ວຄວາມກັງວົນຕາມທຳມະ
ດາໂລກ ແລະຄວາມຫລອກລວງແຫ່ງຊັບສົມບັດກັບຄວາມໂລບໃນສິ່ງອື່ນໆ ໄດ້ເຂົ້າມາຫຸ້ມຮັດ
ພຣະທຳນັ້ນເສຍ ຈຶ່ງບໍ່ເກີດຜົນ. [20]ສ່ວນເມັດທີ່ຕົກໃນດິນດີນັ້ນ ໄດ້ແກ່ຜູ້ທີ່ໄດ້ຍິນພຣະທຳແລະ
ຮັບໄວ້ ຈຶ່ງເກີດຜົນໄດ້ສາມສິບຕໍ່, ຫົກສິບຕໍ່, ແລະຮ້ອຍຕໍ່."

## ຄຳອຸປະມາເລື່ອງໂຄມໄຟ

*(ລກ 8:16-18)*

[21]ແລ້ວພຣະອົງຊົງກ່າວແກ່ເຂົາວ່າ, "ເຂົາບໍ່ທ່ອນເອົາໂຄມໄຟມາເພື່ອຕັ້ງໄວ້ລຸ່ມບຸງ ຫລືລຸ່ມ
ຕຽງນອນຕີ້ ບໍ່ແມ່ນເພື່ອຕັ້ງໄວ້ເທິງເຄື່ອງຮອງຕີນໂຄມຫລື. [22]ເພາະວ່າທຸກສິ່ງທີ່ເຊື່ອງໄວ້ຈະ
ຕ້ອງປະກົດແຈ້ງ ແລະທຸກສິ່ງທີ່ປິດບັງໄວ້ຈະຕ້ອງເປີດເຜີຍອອກ. [23]ຖ້າໃຜມີຫູຢາກ ໃຫ້ຟັງເອົາ
ສາ." [24]ພຣະອົງຊົງກ່າວແກ່ເຂົາວ່າ, "ຈົ່ງເອົາໃຈໃສ່ໃນສິ່ງທີ່ຕົນໄດ້ຟັງ ທ່ານຈະຕວງໃຫ້ເຂົາ
ດ້ວຍເຄື່ອງຜອງອັນໃດ ຈະຊົງຕວງໃຫ້ທ່ານດ້ວຍເຄື່ອງຜອງອັນນັ້ນ ທັງຈະຊົງເພີ່ມເຕີມໃຫ້ອີກ.
[25]ດ້ວຍວ່າຜູ້ໃດມີຢູ່ແລ້ວຈະຊົງເພີ່ມເຕີມໃຫ້ຜູ້ນັ້ນອີກ ແຕ່ຜູ້ໃດບໍ່ມີ ເຖິງແມ່ນສິ່ງທີ່ຕົນມີຢູ່ນັ້ນຈະ
ຊົງຍຶກເອົາໄປຈາກຜູ້ນັ້ນເສຍ."

[26]ພຣະອົງຊົງກ່າວວ່າ, "ລາຊະອານາຈັກຂອງພຣະເຈົ້າປຽບເໝືອນຄົນໜຶ່ງທີ່ຫວ່ານກ້າລົງໃນ
ດິນ. [27]ແລ້ວກາງຄືນກໍນອນຫລັບ ກາງເວັນກໍຕື່ນຂຶ້ນ ຝ່າຍກ້ານັ້ນມັນງອກຈະເລີນຂຶ້ນຢ່າງໃດ
ລາວກໍບໍ່ຮູ້ຈັກ. [28]ເພາະຂີ້ດິນເອງເຮັດໃຫ້ເກີດຜົນຄືເປັນລຳຕົ້ນກ່ອນ ພາຍຫລັງກໍອອກຮວງ
ແລ້ວກໍມີເມັດເຕັມຮວງ. [29]ຄັນສຸກແລ້ວລາວກໍໃຊ້ຄົນໄປກ່ຽວທັນທີ ເພາະວ່າເຖິງລະດູກ່ຽວ
ແລ້ວ."

## ຄຳອຸປະມາເລື່ອງແກ່ນຜັກກາດ

*(ມທ 13:31-32; ລກ 13:18-19)*

[30]ພຣະອົງຊົງກ່າວວ່າ, "ລາຊະອານາຈັກຂອງພຣະເຈົ້າຈະປຽບເໝືອນສິ່ງໃດ ຫລືຈະສະ-
ແດງດ້ວຍຄຳອຸປະມາຢ່າງໃດ. [31]ກໍປຽບເໝືອນແກ່ນຜັກກາດເມັດໜຶ່ງ ເມື່ອຫວ່ານເມັດລົງໃນດິນ
ກໍນ້ອຍກວ່າເມັດທັງປວງທົ່ວໂລກ. [32]ແຕ່ເມື່ອຫວ່ານແລ້ວກໍງອກຈະເລີນໃຫຍ່ຂຶ້ນກວ່າຜັກທັງ
ປວງ[ກ] ແລະແຕກກິ່ງກ້ານໃຫຍ່ຈົນນົກປ່າມາເຮັດຄອນຢູ່ໃນຮົ່ມນັ້ນໄດ້."

---

[ກ]ໃນປະເທດນີ້ມີຕົ້ນຜັກກາດລາງແນວສູງເຖິງສາມສີ່ແມດ.

33ພຣະອົງໄດ້ຊົງກ່າວພຣະທຳເປັນຄຳອຸປະມາຢ່າງນັ້ນຫລາຍປະການໃຫ້ເຂົາຟັງຕາມທີ່ຈະ
ສາມາດເຂົ້າໃຈໄດ້. 34ແລະນອກຈາກຄຳອຸປະມາ ພຣະອົງບໍ່ໄດ້ຊົງກ່າວກັບເຂົາ ແຕ່ເມື່ອຫວ້າງ
ຄົນແລ້ວ ຈຶ່ງຊົງອະທິບາຍສິ່ງສາລະພັດນັ້ນໃຫ້ແກ່ພວກສິດຟັງແຕ່ຈຳເພາະ.

## ພຣະເຢຊູຊົງຫ້າມລົມພະຍຸ

*(ມທ 8:23-27; ລກ 8:22-25)*

35ໃນເວລາແລງມື້ນັ້ນ ພຣະອົງຊົງກ່າວແກ່ເຂົາວ່າ, "ເຮົາຈົ່ງພາກັນຂ້າມໄປຟາກນັ້ນເທາະ."
36ເມື່ອລາປະຊາຊົນແລ້ວ ເຂົາຈຶ່ງເຊີນພຣະອົງສະເດັດໄປໃນເຮືອທີ່ພຣະອົງຊົງປະທັບຢູ່ນັ້ນ
ແລະມີເຮືອອື່ນໆ ຫລາຍລຳໄປພ້ອມ. 37ແລ້ວລົມພະຍຸໃຫຍ່ໄດ້ບັງເກີດຂຶ້ນ ແລະຟອງນ້ຳໄດ້ຊັດ
ເຂົ້າຈົນເຮືອຈວນຈະເຕັມ. 38ຝ່າຍພຣະອົງຊົງບັນທົມໝຸນໝອນຫລັບຢູ່ທ້າຍເຮືອ ພວກສິດຈຶ່ງມາ
ປຸກພຣະອົງທູນວ່າ, "ອາຈານເອີຍ, ທ່ານບໍ່ເປັນຫ່ວງດອກຫລື ພວກຂ້ານ້ອຍກຳລັງຈະຈິບຫາຍ
ຢູ່ແລ້ວ." 39ພຣະອົງຈຶ່ງຊົງຕື່ນຂຶ້ນຫ້າມລົມ ແລະຊົງກ່າວແກ່ທະເລວ່າ, "ມິດສະຫງົບແມ" ແລ້ວ
ລົມກໍເຊົາ ຟອງນ້ຳກໍສະຫງົບງຽບທົ່ວໄປ. 40ແລ້ວພຣະອົງຊົງຖາມເຂົາວ່າ, "ເປັນຫຍັງພວກທ່ານ
ຈຶ່ງຢ້ານ ພວກທ່ານຍັງບໍ່ມີຄວາມເຊື່ອຫລື." 41ຝ່າຍເຂົາກໍຕົກໃຈຫລາຍແລະເວົ້າຕໍ່ກັນວ່າ, "ທ່ານ
ຜູ້ນີ້ແມ່ນໃຜໜໍ ຈົນວ່າລົມແລະທະເລກໍຍອມຟັງເພິ່ນ."

# ບົດທີ 5

## ຄົນທີ່ຜີຮ້າຍສິງ ຢູ່ເຂດແດນຊາວເຄຣາຊາຄືນດີປົກກະຕິ

*(ມທ 8:28-34; ລກ 8:26-39)*

1ຝ່າຍພຣະອົງກັບພວກສິດໄດ້ຂ້າມທະເລໄປເຖິງເຂດແດນຊາວເຄຣາຊາ. 2ພໍພຣະອົງສະ-
ເດັດຂຶ້ນຈາກເຮືອ ກໍມີຄົນໜຶ່ງທີ່ມີຜີຖ່ອຍຮ້າຍສິງຢູ່ໄດ້ອອກຈາກປ່າຊ້າມາພົບພຣະອົງ. 3ຄົນນັ້ນ
ເຄີຍອາໃສຢູ່ຕາມປ່າຊ້າ ແລະບໍ່ມີຜູ້ໃດສາມາດມັດມັນໄວ້ໄດ້ ແມ່ນຈະເອົາໂສ້ລ່າມມັນໄວ້ກໍບໍ່ຢູ່.
4ເພາະວ່າໄດ້ໃສ່ຊືກໃສ່ໂສ້ລ່າມມັນໄວ້ຫລາຍເທື່ອແລ້ວ ແຕ່ໂສ້ນັ້ນມັນກໍເຮັດຂາດ ແລະຊືກມັນກໍ
ເຮັດຫັກມຸ່ນໄປ ບໍ່ມີຜູ້ໃດມີແຮງພໍທີ່ຈະບັງຄັບມັນໄວ້. 5ມັນກໍຮ້ອງຢູ່ເລື້ອຍຕາມປ່າຊ້າແລະທີ່ພູ-
ເຂົາທັງກາງເວັນແລະກາງຄືນ ແລະເອົາໝາກຫີນປາດຕົວເອງ. 6ຄັນມັນເຫັນພຣະເຢຊູແຕ່ໄກກໍ
ແລ່ນເຂົ້າມາຂາບໄຫວ້ພຣະອົງ. 7ແລ້ວຮ້ອງສຽງດັງຂຶ້ນທູນວ່າ, "ເຢຊູບຸດຂອງພຣະເຈົ້າຜູ້ສູງ
ສຸດເອີຍ, ທ່ານມາຫຍຸ້ງກ່ຽວກັບເຮົາດ້ວຍເຫດໃດ ຂໍໃຫ້ທ່ານສາບານໃນພຣະນາມຂອງພຣະເຈົ້າ
ວ່າຈະບໍ່ທໍລະມານເຮົາ." 8ມັນເວົ້າດັ່ງນັ້ນກໍເພາະພຣະອົງຊົງບອກມັນວ່າ, "ອ້າຍຜີຖ່ອຍຮ້າຍ
ອອກມາຈາກຄົນນີ້ແມ." 9ແລ້ວພຣະອົງຊົງຖາມວ່າ, "ມຶງຊື່ຫຍັງ" ມັນຕອບວ່າ, "ຊື່ກອງທັບ
ເພາະພວກເຮົາມີຫລາຍຕົວນຳກັນ." 10ມັນຈຶ່ງໜ່ວງໜ່ຽວອ້ອນວອນພຣະອົງບໍ່ໃຫ້ຂັບໄລ່ມັນອອກ
ຈາກເຂດແດນເມືອງນັ້ນ. 11ມີໝູຝູງໃຫຍ່ກຳລັງຫາກິນຢູ່ຕາມຈ້າຍພູນັ້ນ. 12ຜີເຫລົ່ານັ້ນໄດ້ທູນຂໍ
ພຣະອົງວ່າ, "ຂໍໂຜດໃຫ້ພວກເຮົາເຂົ້າສິງຢູ່ໃນໝູຝູງນີ້ທ້ອນ" ພຣະອົງກໍຊົງອະນຸຍາດໃຫ້.
13ແລ້ວຜີຖ່ອຍຮ້າຍເຫລົ່ານັ້ນຈຶ່ງອອກໄປເຂົ້າສິງຢູ່ໃນຝູງໝູ ໝູທັງຝູງປະມານສອງພັນໂຕ ກໍ
ຟ້າວແລ່ນລົງຈາກຕາຫລິ່ງຊັນໂຕນໃສ່ທະເລຈົມນ້ຳຕາຍທັນທີ.

14ຝ່າຍຄົນລ້ຽງໝູນັ້ນຕ່າງຄົນຕ່າງໜີໄປ ເລົ່າເລື່ອງທັງໃນເມືອງແລະນອກເມືອງແລ້ວຄົນທັງ
ປວງກໍອອກມາເບິ່ງເຫດການທີ່ເກີດຂຶ້ນນັ້ນ. 15ເມື່ອເຂົາມາເຖິງພຣະເຢຊູກໍເຫັນຄົນທີ່ຜີທັງກອງ-
ທັບສິງຢູ່ນັ້ນ ນຸ່ງຫົ່ມເສື້ອຜ້າມີສະຕິອາລົມດີ ເຂົາຈຶ່ງມີໃຈຢ້ານ. 16ແລະພວກຄົນທີ່ໄດ້ເຫັນກໍເລົ່າ
ເຫດການຊຶ່ງບັງເກີດແກ່ຄົນທີ່ມີຜີສິງຢູ່ນັ້ນ ກັບເຫດການຊຶ່ງບັງເກີດແກ່ຝູງໝູໃຫ້ເຂົາຟັງ. 17ຄົນ
ທັງຫລາຍກໍຕັ້ງຕົ້ນອ້ອນວອນທູນ ຂໍໃຫ້ພຣະອົງອອກໄປເສຍຈາກເຂດແດນຂອງເຂົາ. 18ເມື່ອ
ພຣະອົງກຳລັງສະເດັດລົງເຮືອ ຄົນທີ່ຜີສິງຢູ່ແຕ່ກ່ອນນັ້ນໄດ້ອ້ອນວອນຂໍຢູ່ກັບພຣະອົງ. 19ພຣະ-
ອົງບໍ່ໄດ້ຊົງອະນຸຍາດ ແຕ່ຊົງກ່າວແກ່ລາວວ່າ, "ໃຫ້ເຈົ້າເມືອບ້ານຫາຍາດພີ່ນ້ອງ ແລ້ວບອກ
ເຂົາເຖິງເລື່ອງເຫດການອັນໃຫຍ່ຊຶ່ງພຣະເຈົ້າໄດ້ຊົງໂຜດແກ່ເຈົ້າແລະຊົງພຣະເມດຕາແກ່ເຈົ້າ
ແລ້ວ." 20ຝ່າຍຄົນນັ້ນກໍທູນລາແລ້ວຕັ້ງຕົ້ນປະກາດໃນແຂວງເດກາໂປລີ ເຖິງເຫດການທີ່ພຣະ-
ເຢຊູໄດ້ຊົງໂຜດແກ່ຕົນແລະຄົນທັງປວງກໍງຶດປະຫລາດໃຈຫລາຍ.

## ລູກສາວຂອງຢາອີໂຣແລະຍິງທີ່ຢື້ຈັບເຄື່ອງທົງຂອງພຣະເຢຊູ

*(ມທ 9:18-26; ລກ 8:40-56)*

21ຄັນພຣະເຢຊູສະເດັດລົງເຮືອຂ້າມຟາກກັບໄປແລ້ວ ມີຄົນຫລວງຫລາຍມາຫາພຣະອົງ
ຝ່າຍພຣະອົງຍັງຊົງປະທັບຢູ່ແຄມທະເລ. 22ມີນາຍໂຮງທຳມະເທດສະໜາຜູ້ໜຶ່ງຊື່ຢາອີໂຣຍ່າງ
ມາ ແລະເມື່ອເພິ່ນເຫັນພຣະເຢຊູກໍຂາບລົງທີ່ພຣະບາດຂອງພຣະອົງ. 23ແລ້ວທູນອ້ອນວອນ
ໜ່ວງໜ່ຽວພຣະອົງວ່າ, "ລູກສາວນ້ອຍຂອງຂ້າພະເຈົ້າເຈັບຈອນຈະຕາຍແລ້ວ ຂໍເຊີນທ່ານໄປ
ຢຽດມືລົງໃສ່ມັນ ເພື່ອມັນຈະໄດ້ພົ້ນຕາຍມີຊີວິດຢູ່." 24ຝ່າຍພຣະອົງກໍສະເດັດໄປກັບຄົນນັ້ນ ມີ
ຄົນຫລວງຫລາຍຕາມໄປແລະບຽດພຣະອົງ.

25ມີຜູ້ຍິງຄົນໜຶ່ງເປັນພະຍາດເລືອດຕົກໄດ້ສິບສອງປີມາແລ້ວ. 26ນາງໄດ້ທົນທຸກລຳບາກ
ຫລາຍເຕັມທີ ເຖິງມີໝໍຫລາຍຄົນໄດ້ປິ່ນປົວແລະໄດ້ເສຍຊັບທັງໝົດ ພະຍາດນັ້ນກໍບໍ່ໄດ້ທຸເລົາ
ລົງແຕ່ແຮ່ງກຳເລີບຂຶ້ນ. 27ເມື່ອຍິງນັ້ນໄດ້ຍິນເຖິງເລື່ອງພຣະເຢຊູ ນາງກໍຍ່າງເຂົ້າປົນກັບປະ-
ຊາຊົນທີ່ເບື້ອງຫລັງພຣະອົງ ແລ້ວບາຍເຄື່ອງທົງຂອງພຣະອົງ. 28ເພາະນາງເວົ້າວ່າ, "ຖ້າເຮົາ
ໄດ້ບາຍເສື້ອຂອງເພິ່ນແຕ່ເທົ່ານັ້ນເຮົາກໍຈະດີພະຍາດ." 29ໃນທັນໃດນັ້ນເລືອດທີ່ຕົກນັ້ນກໍຢຸດ
ແຫ້ງໄປ ແລະຍິງຄົນນັ້ນກໍຮູ້ສຶກຕົວວ່າໄດ້ດີພະຍາດແລ້ວ. 30ບັດດຽວນັ້ນພຣະເຢຊູຊົງຮູ້ສຶກວ່າ
ລິດໄດ້ອອກຈາກພຣະອົງແລ້ວ ຈຶ່ງທອດພຣະເນດທາງປະຊາຊົນຖາມວ່າ, "ແມ່ນໃຜໄດ້ບາຍ
ເສື້ອຂອງເຮົາ." 31ຝ່າຍພວກສິດກໍທູນວ່າ, "ທ່ານເຫັນແລ້ວ ປະຊາຊົນກຳລັງບຽດທ່ານຢູ່ ແລະ
ຍັງຈະຖາມອີກຫລືວ່າ 'ໃຜໄດ້ບາຍເຮົາ'." 32ແລະພຣະເຢຊູໄດ້ທອດພຣະເນດເບິ່ງອ້ອມ ປະສົງ
ຈະເຫັນຜູ້ທີ່ໄດ້ເຮັດການນັ້ນ. 33ຝ່າຍຜູ້ຍິງນັ້ນກໍຢ້ານຈົນຕົວສັ່ນ ເພາະຮູ້ເລື່ອງທີ່ເກີດແກ່ຕົນ ຈຶ່ງ
ມາຂາບລົງທູນຕໍ່ພຣະອົງຕາມຄວາມຈິງທັງສິ້ນ. 34ພຣະອົງຈຶ່ງຊົງກ່າວແກ່ຍິງນັ້ນວ່າ, "ລູກຍິງ
ເອີຍ, ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ ຈົ່ງໄປເປັນສຸກແລະດີພະຍາດເຖີນ."

35ໃນຂະນະທີ່ພຣະເຢຊູຍັງຊົງກ່າວຢູ່ນັ້ນ ມີບາງຄົນມາຈາກເຮືອນນາຍໂຮງທຳບອກວ່າ,
"ລູກສາວຂອງທ່ານຕາຍເສຍແລ້ວ ຍັງຈະລົບກວນອາຈານອີກເຮັດຫຍັງ." 36ຝ່າຍພຣະເຢຊູບໍ່
ໄດ້ຊົງຟັງຄວາມເຂົາເວົ້ານັ້ນ ຈຶ່ງຊົງກ່າວແກ່ນາຍໂຮງທຳວ່າ, "ຢ່າວິຕົກເທາະ ຈົ່ງເຊື່ອເທົ່ານັ້ນ."

37ພຣະອົງບໍ່ຊົງອະນຸຍາດໃຫ້ຜູ້ໃດໄປນຳ ເວັ້ນແຕ່ເປໂຕ, ຢາໂກໂບ, ແລະໂຢຮັນນ້ອງຊາຍຂອງ
ຢາໂກໂບ. 38ຄັນພຣະອົງສະເດັດພ້ອມກັບຄົນເຫລົ່ານັ້ນໄປເຖິງເຮືອນນາຍໂຮງທຳແລ້ວ ກໍຊົງ
ເຫັນການວຸ້ນວາຍທັງຄົນຮ້ອງໄຫ້ແຜດສຽງຮ່ຳໄຮຫລາຍຢູ່. 39ແລະເມື່ອພຣະອົງສະເດັດເຂົ້າໄປ
ເຖິງແລ້ວ ກໍຊົງຖາມເຂົາວ່າ, "ພວກເຈົ້າພາກັນວຸ້ນວາຍຮ້ອງໄຫ້ເຮັດຫຍັງ ເດັກນ້ອຍນັ້ນບໍ່ຕາຍ
ດອກ ແຕ່ຫລັບຢູ່ເທົ່ານັ້ນ." 40ເຂົາກໍພາກັນຫົວຂວັນພຣະອົງ ແຕ່ເມື່ອພຣະອົງຊົງໄລ່ຄົນທັງປວງ
ອອກແລ້ວ ຈຶ່ງພາພໍ່ແມ່ກັບສິດທັງສາມທີ່ຕາມພຣະອົງມານັ້ນ ເຂົ້າໄປໃນບ່ອນເດັກນ້ອຍນອນຢູ່.
41ພຣະອົງຊົງຈັບມືເດັກນ້ອຍນັ້ນ ແລ້ວຊົງກ່າວວ່າ, "ຕາລິທາກຸມ" ແປວ່າ "ຍິງນ້ອຍເອີຍ, ເຮົາ
ບອກເຈົ້າຈົ່ງລຸກຂຶ້ນແມ." 42ໃນທັນໃດນັ້ນເດັກນ້ອຍນັ້ນກໍລຸກຂຶ້ນຍ່າງໄປມາ ເພາະວ່າອາຍຸລາວ
ໄດ້ສິບສອງປີແລ້ວ ໃນບັດດຽວນັ້ນຄົນທັງປວງກໍງຶດປະຫລາດໃຈຫລາຍ. 43ພຣະອົງກໍຊົງສັ່ງ
ຫ້າມເຂົາຢ່າງເດັດຂາດ ບໍ່ໃຫ້ຜູ້ໃດບອກຮູ້ເຫດການນີ້ ແລ້ວຈຶ່ງຊົງສັ່ງເຂົາໃຫ້ເອົາອາຫານມາໃຫ້
ເດັກນ້ອຍນັ້ນກິນ.

# ບົດທີ 6

## ຊາວນາຊາເຣັດບໍ່ຮັບພຣະເຢຊູ

*(ມທ 13:53-58; ລກ 4:16-30)*

1ຝ່າຍພຣະເຢຊູໄດ້ສະເດັດຈາກທີ່ນັ້ນໄປຍັງເມືອງເດີມຂອງພຣະອົງ ແລະພວກສິດກໍຕາມ
ພຣະອົງໄປ. 2ເມື່ອເຖິງວັນຊະບາໂຕແລ້ວ ພຣະອົງຊົງສັ່ງສອນໃນໂຮງທຳ ແລະຫລາຍໆ ຄົນ
ທີ່ໄດ້ຍິນພຣະອົງກໍງຶດປະຫລາດໃຈຈຶ່ງເວົ້າກັນວ່າ, "ຄົນນີ້ໄດ້ສິ່ງເຫລົ່ານີ້ມາແຕ່ໃສ ສະຕິປັນຍາ
ທີ່ໄດ້ປະທານແກ່ຄົນນີ້ແມ່ນປັນຍາຢ່າງໃດ ເພາະວ່າການອິດທິລິດຢ່າງນີ້ກໍຍັງສຳເລັດໄດ້ດ້ວຍມື
ຂອງລາວເອງ. 3ຄົນນີ້ເປັນຊ່າງໄມ້ລູກນາງມາຣິອາບໍ່ແມ່ນຫລື ຢາໂກໂບ, ໂຢເຊ, ຢູດາ ແລະ
ຊີໂມນ ເປັນນ້ອງຊາຍຂອງລາວບໍ່ແມ່ນຫລື ພວກນ້ອງສາວຂອງລາວກໍຢູ່ທີ່ນີ້ກັບພວກເຮົາ ບໍ່
ແມ່ນຫລື" ເຂົາຈຶ່ງມີໃຈໜ່າຍແໜງພຣະອົງ. 4ຝ່າຍພຣະເຢຊູຊົງກ່າວແກ່ເຂົາວ່າ, "ຜູ້ປະກາດ
ພຣະທຳຈະບໍ່ຂາດຄວາມນັບຖື ເວັ້ນແຕ່ໃນເມືອງເດີມຂອງຕົນ, ຖ້າມກາງຍາດພີ່ນ້ອງ, ແລະໃນ
ຄົວເຮືອນຂອງຕົນ." 5ພຣະອົງຈະທຳການອິດທິລິດທີ່ນັ້ນບໍ່ໄດ້ ເວັ້ນແຕ່ໄດ້ຊົງວາງພຣະຫັດເທິງ
ຄົນເຈັບປ່ວຍບາງຄົນໃຫ້ດີພະຍາດ. 6ພຣະອົງກໍປະຫລາດພຣະໄທເພາະເຂົາບໍ່ມີຄວາມເຊື່ອ
ແລ້ວ. ພຣະອົງໄດ້ສະເດັດໄປສັ່ງສອນທົ່ວທຸກບ້ານຮອບເຂດນັ້ນ.

## ພຣະເຢຊູຊົງໃຊ້ສິບສອງຄົນອອກໄປ

*(ມທ 10:5-15; ລກ 9:1-6)*

7ພຣະອົງໄດ້ຊົງເອີ້ນສິບສອງຄົນນັ້ນມາ ແລ້ວຊົງຕັ້ງຕົ້ນໃຊ້ເຂົາໃຫ້ອອກໄປເປັນຄູ່ໆ ແລະຊົງ
ປະທານໃຫ້ເຂົາມີອຳນາດເໜືອຜີຖ່ອຍຮ້າຍ. 8ແລ້ວຊົງສັ່ງເຂົາບໍ່ໃຫ້ເອົາສິ່ງໃດໄປໃຊ້ຕາມທາງ
ເວັ້ນແຕ່ໄມ້ເທົ້າສິ່ງດຽວ ຫ້າມບໍ່ໃຫ້ເອົາອາຫານຫລືຖົງ ຫລືເອົາເງິນໃສ່ກະເປົາສາຍຮັດແອວໄປ,
9ໃຫ້ໃສ່ເກີບ ແຕ່ບໍ່ໃຫ້ໃສ່ເສື້ອສອງໂຕ. 10ແລ້ວພຣະອົງຊົງສັ່ງເຂົາວ່າ, "ຖ້າໄປບ່ອນໃດ ເມື່ອ
ເຂົ້າອາໃສໃນເຮືອນຫລັງໃດ ກໍໃຫ້ອາໃສຢູ່ໃນເຮືອນຫລັງນັ້ນກວ່າຈະຈາກບ່ອນນັ້ນໄປ. 11ແລະ

ຖ້າບ່ອນໃດບໍ່ຕ້ອນຮັບຫລືບໍ່ຟັງທ່ານທັງຫລາຍ ຈົ່ງອອກຈາກບ່ອນນັ້ນໄປ ແລະຈົ່ງສັ່ນຂີ້ຝຸ່ນທີ່
ຕິດຝາຕີນຂອງພວກທ່ານອອກເສຍ ເພື່ອເປັນພະຍານຕໍ່ເຂົາ.” 12ຝ່າຍພວກສິດກໍພາກັນອອກໄປ
ປະກາດໃຫ້ຄົນທັງຫລາຍຖິ້ມໃຈເກົ່າເອົາໃຈໃໝ່. 13ເຂົາໄດ້ຂັບໄລ່ຜີຮ້າຍອອກເສຍຫລາຍໂຕ
ແລະເອົານໍ້າມັນທາຄົນເຈັບປ່ວຍຫລາຍຄົນໃຫ້ດີພະຍາດ.

## ຄວາມມໍລະນະພາບຂອງໂຢຮັນບັບຕິສະໂຕ

*(ມທ 14:1-12; ລກ 9:7-9)*

14ຝ່າຍກະສັດ ເຮໂຣດ ຊົງຊາບເລື່ອງຂອງ ພຣະເຢຊູ ເພາະວ່າພຣະນາມຂອງພຣະອົງໄດ້ຊ່າລື
ໄປ ມີບາງຄົນເວົ້າກັນວ່າ, “ໂຢຮັນ ບັບຕິສະໂຕ ເປັນຄືນມາຈາກຕາຍແລ້ວ ດ້ວຍເຫດນີ້ລິດອຳ-
ນາດນີ້ຈຶ່ງສະແດງອອກມາໃນເພິ່ນ.” 15ແຕ່ຄົນອື່ນວ່າ, “ເປັນ ເອລີຢາ” ແລະຄົນອື່ນໆ ວ່າ,
“ເປັນຜູ້ປະກາດພຣະທຳ ເໝືອນຄົນໜຶ່ງໃນພວກຜູ້ປະກາດພຣະທຳແຕ່ກ່ອນ.” 16ຝ່າຍກະສັດ
ເຮໂຣດ ເມື່ອຊາບແລ້ວກໍຊົງກ່າວວ່າ, “ແມ່ນ ໂຢຮັນ ຜູ້ເຮົາໄດ້ຕັດຫົວ ຜູ້ນັ້ນແຫລະ, ໄດ້ຄືນມາ
ແລ້ວ.” 17ເພາະແມ່ນ ເຮໂຣດ ນີ້ເອງໄດ້ຊົງໃຊ້ຄົນໄປຈັບ ໂຢຮັນ ຜູກມັດຂັງຄຸກໄວ້ ເພາະເຫັນແກ່
ນາງ ເຮໂຣເດຍ ພັນລະຍາຂອງ ຟີລິບ ນ້ອງຊາຍຕົນ ດ້ວຍວ່າ ເຮໂຣດ ໄດ້ຮັບເອົານາງນັ້ນມາເປັນ
ພັນລະຍາຂອງຕົນ. 18ເພາະ ໂຢຮັນ ເຄີຍທູນ ເຮໂຣດ ວ່າ, “ທີ່ທ່ານຈະເອົາພັນລະຍາຂອງນ້ອງມາ
ເປັນພັນລະຍາຂອງຕົນນັ້ນກໍຜິດຕໍ່ກົດ.” 19ແລະນາງ ເຮໂຣເດຍ ກໍຜູກພະຍາບາດ ໂຢຮັນ ມີໃຈ
ຢາກຂ້າທ່ານເສຍ ແຕ່ຂ້າບໍ່ໄດ້. 20ເພາະ ເຮໂຣດ ຊົງຢຳເກງ ໂຢຮັນ ດ້ວຍຊາບວ່າ ໂຢຮັນ ເປັນ
ຄົນບໍລິສຸດສັດຊື່ ເຮໂຣດ ຈຶ່ງຊົງປ້ອງກັນ ໂຢຮັນ ໄວ້ ເມື່ອ ເຮໂຣດ ໄດ້ຍິນຄຳສັ່ງສອນຂອງທ່ານ ກໍ
ຊົງລັງເລພຣະໄທຢ່າງໜັກ ແຕ່ກໍຍັງຍອມຟັງດ້ວຍຄວາມຍິນດີ.

21ຄັນຢູ່ມາວັນໜຶ່ງເປັນໂອກາດດີ ຄືເປັນວັນສະຫລອງວັນກຳເນີດຂອງ ເຮໂຣດ ເຮໂຣດ ໄດ້
ຊົງຈັດການກິນລ້ຽງພວກເສນາບໍດີກັບນາຍທະຫານຊັ້ນຜູ້ໃຫຍ່ ແລະບັນດາຄົນສຳຄັນໃນແຂວງ
ຄາລີເລ. 22ເມື່ອບຸດຍິງຂອງນາງ ເຮໂຣເດຍ ຜູ້ນັ້ນເຂົ້າມາຟ້ອນລຳກໍເຮັດໃຫ້ກະສັດ ເຮໂຣດ ຊອບ
ພຣະໄທ ແລະແຂກທີ່ມາຮ່ວມຊອບໃຈເໝືອນກັນ ກະສັດຈຶ່ງຊົງກ່າວແກ່ຍິງສາວນັ້ນວ່າ, “ເຈົ້າ
ຈະຂໍສິ່ງໃດກໍຈະໃຫ້ສິ່ງນັ້ນ.” 23ແລະກະສັດຈຶ່ງຊົງສາບານປະຕິຍານຕົວວ່າ, “ເຈົ້າຈະຂໍສິ່ງໃດ
ເຮົາຈະໃຫ້ສິ່ງນັ້ນ ຈົນເຖິງເຄິ່ງລາຊະສົມບັດຂອງເຮົາ.” 24ຍິງສາວນັ້ນຈຶ່ງອອກໄປຖາມມານດາ
ວ່າ, “ລູກຈະຂໍສິ່ງໃດຈຶ່ງຈະດີ” ມານດາຈຶ່ງຕອບວ່າ, “ຂໍຫົວ ໂຢຮັນ ບັບຕິສະໂຕ ສາ.” 25ໃນທັນ-
ໃດນັ້ນຍິງສາວກໍຮີບເຂົ້າໄປເຝົ້າກະສັດທູນວ່າ, “ທານໂທດທານຊີວິດ ຂໍປະທານຫົວ ໂຢຮັນ ບັບ-
ຕິສະໂຕ ໃສ່ຖາດມາໃຫ້ຂ້ານ້ອຍດຽວນີ້ເທີນ.” 26ພຣະອົງຊົງທຸກພຣະໄທຢ່າງໜັກ ແຕ່ເພາະເຫດ
ໄດ້ຊົງສາບານຕົວໄວ້ ແລະເພາະເຫັນແກ່ໜ້າແຂກທີ່ມາຮ່ວມກໍບໍ່ຢາກຂັດຂືນນາງ. 27ໃນຂະນະ
ນັ້ນກະສັດຈຶ່ງຊົງຮັບສັ່ງທະຫານຮັກສາພຣະອົງຜູ້ໜຶ່ງ ໃຫ້ໄປເອົາຫົວ ໂຢຮັນ ມາ. 28ທະຫານຜູ້
ນັ້ນຈຶ່ງໄປຕັດເອົາຫົວ ໂຢຮັນ ໃນຄຸກໃສ່ຖາດມາໃຫ້ແກ່ຍິງສາວນັ້ນ ແລະນາງກໍສົ່ງໃຫ້ມານດາ
ຂອງຕົນ. 29ເມື່ອພວກສິດຂອງ ໂຢຮັນ ຮູ້ເຫດການນັ້ນແລ້ວ ກໍມາຮັບເອົາສົບຂອງເພິ່ນໄປວາງໄວ້
ໃນອຸບໂມງ.

## ພຣະເຢຊູຊົງລ້ຽງຫ້າພັນຄົນ

*(ມທ 14:13-21; ລກ 9:10-17; ຢຮ 6:1-14)*

30ຝ່າຍອັກຄະສາວົກໄດ້ພາກັນມາເຝົ້າພຣະເຢຊູ ທູນລາຍງານທັງໝົດທີ່ເຂົາໄດ້ເຮັດແລະໄດ້
ສັ່ງສອນໃຫ້ພຣະອົງຊົງຊາບ. 31ແລ້ວພຣະອົງຊົງກ່າວແກ່ເຂົາວ່າ, "ພວກເຮົາຈົ່ງພາກັນໄປໃນ
ບ່ອນສະຫງັດ ໃຫ້ພວກທ່ານພັກເຊົາເມື່ອຍຈັກໜ້ອຍໜຶ່ງ" ເພາະມີຄົນຫລວງຫລາຍຫຽວໄປມາ
ຈົນບໍ່ມີເວລາຫວ້າງພໍຈະຮັບປະທານອາຫານໄດ້. 32ພຣະອົງຈຶ່ງສະເດັດລົງເຮືອພ້ອມກັບພວກ
ສາວົກໄປຍັງບ່ອນສະຫງັດຢູ່ຕ່າງຫາກ. 33ຫລາຍຄົນໄດ້ເຫັນພຣະອົງກັບພວກສາວົກພວມໄປ
ເຂົາກໍສັງເກດຮູ້ ຈຶ່ງຮີບພາກັນອອກຈາກທຸກບ້ານທຸກເມືອງຍ່າງໄປເຖິງທີ່ນັ້ນກ່ອນ. 34ຄັນພຣະ-
ເຢຊູສະເດັດຂຶ້ນຈາກເຮືອແລ້ວ ກໍຊົງເຫັນປະຊາຊົນໝູ່ໃຫຍ່ ແລະຊົງສົງສານເຂົາ ເພາະວ່າເຂົາ
ເປັນເໝືອນຝູງແກະບໍ່ມີຜູ້ລ້ຽງ ພຣະອົງຈຶ່ງຊົງຕັ້ງຕົ້ນສັ່ງສອນເຂົາເປັນຫລາຍຂໍ້ຫລາຍປະການ.
35ເມື່ອຄ້າຍຄ່ຳມາແລ້ວ ພວກສາວົກມາທູນພຣະອົງວ່າ, 'ບ່ອນນີ້ແມ່ນປ່າ ແລະບັດນີ້ກໍຄ້າຍ
ຄ່ຳແລ້ວ. 36ຂໍທ່ານຈົ່ງໃຫ້ເຂົາເລີກໄປເສຍ ເພື່ອເຂົາຈະໄດ້ໄປຊື້ອາຫານຮັບປະທານຕາມບ້ານ
ໄຮ່ບ້ານນາແຖບນີ້." 37ພຣະອົງຊົງຕອບເຂົາວ່າ, "ພວກທ່ານຈົ່ງລ້ຽງເຂົາສາ" ເຂົາຈຶ່ງທູນພຣະ-
ອົງວ່າ, "ຈະໃຫ້ພວກຂ້ານ້ອຍໄປຊື້ອາຫານເຖິງສອງຮ້ອຍຫລຽນເດນາຣິອົນ ໃຫ້ເຂົາກິນຫລື."
38ພຣະອົງຊົງກ່າວວ່າ, "ພວກທ່ານມີເຂົ້າຈີ່ຈັກກ້ອນ ຈົ່ງໄປເບິ່ງດູ" ແລະເມື່ອຮູ້ແລ້ວເຂົາຈຶ່ງທູນ
ວ່າ, "ມີເຂົ້າຈີ່ຫ້າກ້ອນແລະປາສອງໂຕ." 39ພຣະອົງຈຶ່ງຊົງສັ່ງພວກສາວົກໃຫ້ຈັດຄົນທັງປວງນັ່ງ
ຮ່ວມກັນທີ່ປ່າຫຍ້າສົດເປັນໝູ່ໆ. 40ແລະປະຊາຊົນໄດ້ນັ່ງລົງເປັນແຖວ ແຖວລະຮ້ອຍຄົນແລະ
ແຖວລະຫ້າສິບຄົນ. 41ເມື່ອພຣະອົງຊົງຮັບເຂົ້າຈີ່ຫ້າກ້ອນແລະປາສອງໂຕນັ້ນແລ້ວກໍຊົງເງີຍ
ພຣະພັກເບິ່ງຟ້າສະຫວັນຂໍພຣະພອນ ແລ້ວຊົງຫັກເຂົ້າຈີ່ຍື່ນໃຫ້ພວກສາວົກໄປແຈກແກ່ຄົນທັງ
ປວງ ແລະປາສອງໂຕນັ້ນກໍຊົງແບ່ງໃຫ້ທົ່ວເຖິງກັນເໝືອນກັນ. 42ເຂົາໄດ້ກິນອີ່ມທຸກຄົນ.
43ສ່ວນຕ່ອນຫັກແລະປາທີ່ເຫລືອນັ້ນ ເຂົາເກັບໄດ້ເຕັມສິບສອງບຸງ. 44ໃນຈຳນວນຄົນທີ່ໄດ້ຮັບ
ປະທານເຂົ້າຈີ່ນັ້ນ ມີຜູ້ຊາຍຫ້າພັນຄົນ.

## ພຣະເຢຊູຊົງດຳເນີນເທິງນ້ຳ

*(ມທ 14:22-33; ຢຮ 6:15-21)*

45ໃນທັນໃດນັ້ນພຣະອົງຊົງສັ່ງໃຫ້ພວກສາວົກລົງເຮືອຂ້າມຟາກໄປຍັງເມືອງເບັດຊາອີດາ
ກ່ອນ ຂະນະທີ່ພຣະອົງຊົງສັ່ງໃຫ້ປະຊາຊົນເລີກໄປ. 46ເມື່ອຊົງລາຈາກເຂົາແລ້ວ ພຣະອົງໄດ້
ສະເດັດຂຶ້ນເມືອພູເພື່ອໄຫວ້ວອນ. 47ເມື່ອຄ່ຳມາແລ້ວເຮືອນັ້ນກໍຢູ່ກາງທະເລ ສ່ວນພຣະອົງຊົງຢູ່
ບົກແຕ່ຕົນດຽວ. 48ແລະພຣະອົງທອດພຣະເນດເຫັນພວກສາວົກກຳລັງແຈວເຮືອດ້ວຍຄວາມລຳ-
ບາກຫລາຍ ເພາະເຮືອຕ້ານທວນລົມຢູ່ ຄັນປະມານຍາມສີ່ກາງຄືນ ພຣະອົງຈຶ່ງຊົງຍ່າງເທິງນ້ຳ
ໄປຫາພວກສາວົກ ແລະພຣະອົງຊົງຍ່າງດັ່ງຈະກາຍເຂົາໄປ. 49ແຕ່ເມື່ອພວກສາວົກໄດ້ເຫັນ
ພຣະອົງຊົງຍ່າງເທິງນ້ຳ ເຂົາກໍຄຶດວ່າແມ່ນຜີ ແລ້ວຈຶ່ງພາກັນຮ້ອງຂຶ້ນ. 50ເພາະວ່າທຸກຄົນເຫັນ
ແລ້ວກໍຕົກໃຈ ໃນທັນໃດນັ້ນພຣະອົງຊົງອອກພຣະໂອດກ່າວແກ່ເຂົາວ່າ, "ຢ່ານ້ອຍໃຈເທາະ
ແມ່ນເຮົາເອງ ຢ່າຊູ່ຢ້ານ." 51ພຣະອົງຈຶ່ງສະເດັດຂຶ້ນໄປຫາເຂົາເທິງເຮືອ ແລ້ວລົມກໍງຽບລົງ.

52ພວກສາວົກກໍປະຫລາດອັດສະຈັນໃຈເຫລືອເກີນ ເພາະວ່າເລື່ອງເຂົ້າຈີ່ນັ້ນເຂົາຍັງບໍ່ໄດ້ເຂົ້າໃຈ
ແຕ່ໃຈຂອງເຂົາຍັງແຂງກະດ້າງປີກຕັນຢູ່.

## ພຣະເຢຊູຊົງໂຜດຄົນເຈັບປ່ວຍໃນເຄັນເນຊາເຣັດ

*(ມທ 14:34-36)*

53ຄັນຂ້າມຟາກໄປເຖິງແລ້ວ ເຂົາກໍຈອດທີ່ທ່າເມືອງເຄັນເນຊາເຣັດ. 54ເມື່ອພຣະເຢຊູສະ-
ເດັດຂຶ້ນຈາກເຮືອພ້ອມດ້ວຍພວກສາວົກແລ້ວ ຄົນທັງປວງກໍຈຳພຣະອົງໄດ້ທັນທີ. 55ແລະເຂົາ
ຮີບໄປທົ່ວຂົງເຂດນັ້ນ ຕັ້ງຕົ້ນເອົາຄົນເຈັບປ່ວຍໃສ່ບ່ອນນອນຫາມມາຍັງບ່ອນທີ່ເຂົາໄດ້ຍິນຂ່າວ
ວ່າພຣະອົງປະທັບຢູ່. 56ເມື່ອພຣະອົງສະເດັດໄປທີ່ໃດໃນເມືອງຫລືບ້ານນອກບ້ານນາກໍດີ ເຂົາກໍ
ເອົາຄົນເຈັບປ່ວຍມາວາງໄວ້ຕາມແຄມທາງບ່ອນຊຸມຊົນ ແລ້ວທູນຂໍພຣະອົງຊົງໂຜດໃຫ້ຄົນເຈັບ
ປ່ວຍໄດ້ບາຍແຕ່ແຄມເຄື່ອງທົງຂອງພຣະອົງ ແລະຜູ້ໃດໄດ້ບາຍແລ້ວກໍຖືກຊົງໂຜດໃຫ້ດີພະຍາດ
ທຸກຄົນ.

# ບົດທີ 7

## ຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ

*(ມທ 15:1-9)*

1ເມື່ອນັ້ນພວກຟາຣີຊາຍ ແລະນັກທຳບາງຄົນຊຶ່ງມາຈາກກຸງເຢຣູຊາເລັມ ພາກັນມາຫາພຣະ-
ອົງ. 2ເຂົາໄດ້ເຫັນສາວົກຂອງພຣະອົງລາງຄົນຮັບປະທານອາຫານດ້ວຍມືບໍ່ສະອາດ ຄືບໍ່ລ້າງມື
ຕາມພິທີກ່ອນ. 3ເພາະວ່າພວກຟາຣີຊາຍກັບຊາວຢິວທັງໝົດ ເຄີຍຖືຕາມຄຳສອນທີ່ຕົກທອດ
ມາຈາກເຖົ້າເກົ່າບູຮານວ່າ ຖ້າບໍ່ໄດ້ລ້າງມືຕາມພິທີຄືແຕ່ມືເຖິງຄໍ່ ເຂົາກໍບໍ່ຮັບປະທານອາຫານ.
4ແລະເມື່ອເຂົາມາຈາກຕະຫລາດ ຖ້າບໍ່ໄດ້ທຳພິທີຊຳລະຕົວກ່ອນ ເຂົາກໍບໍ່ຮັບປະທານອາຫານ
ແລະເຂົາຍັງຖືທຳນຽມອື່ນໆ ອີກຫລາຍຢ່າງ ຄືການລ້າງຖ້ວຍຊາມ, ລ້າງພາຊະນະທອງແດງ
ທອງເຫລືອງ [ແລະຕຽງນອນ]. 5ພວກຟາຣີຊາຍກັບພວກນັກທຳຈຶ່ງທູນຖາມພຣະອົງວ່າ, “ເປັນ
ຫຍັງພວກສິດຂອງທ່ານຈຶ່ງບໍ່ຕິດຕາມຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ ແຕ່ຍັງຮັບປະ-
ທານອາຫານດ້ວຍມືບໍ່ສະອາດ.” 6ພຣະອົງຊົງຕອບເຂົາວ່າ, “ເອຊາຢາໄດ້ທຳນວາຍຄັກແນ່ເຖິງ
ພວກເຈົ້າ ຜູ້ເປັນຄົນໜ້າຊື່ໃຈຄົດ ຕາມທີ່ຂຽນໄວ້ວ່າ,

‘ພົນລະເມືອງເຫລົ່ານີ້ໃຫ້ກຽດເຮົາແຕ່ປາກ
ສ່ວນໃຈຂອງເຂົາຫ່າງໄກຈາກເຮົາ.
7 ເຂົານະມັດສະການເຮົາໂດຍອັບປະໂຍດ
ດ້ວຍເອົາບົດບັນຍັດຂອງມະນຸດ
ມາຕູ່ວ່າ ເປັນພຣະໂອວາດ’.

8ເຈົ້າທັງຫລາຍປະລະພຣະບັນຍັດຂອງພຣະເຈົ້າ ແລະກັບໄປຍຶດຖືຕາມຄຳສອນທີ່ຕົກທອດມາ
ຈາກມະນຸດ.” 9ພຣະອົງຊົງກ່າວແກ່ເຂົາອີກວ່າ, “ເກີນວ່າດີແທ້ໜໍ ທີ່ເຈົ້າທັງຫລາຍໄດ້ລະຖິ້ມ
ພຣະບັນຍັດຂອງພຣະເຈົ້າ ໄປຖືຕາມຄຳສອນທີ່ສືບຕໍ່ມາຈາກເຖົ້າເກົ່າບູຮານ. 10ເພາະວ່າໂມເຊ

ໄດ້ສັ່ງໄວ້ວ່າ, 'ຈົ່ງນັບຖືບິດາມານດາຂອງເຈົ້າ' ແລະ 'ຜູ້ໃດໝິ່ນປະໝາດບິດາມານດາຈະຕ້ອງມີ
ໂທດເຖິງຕາຍ.' 11ແຕ່ຝ່າຍພວກເຈົ້າກັບເວົ້າວ່າ 'ຖ້າຜູ້ໃດຈະເວົ້າກັບບິດາມານດາວ່າ, "ສິ່ງໃດ
ຂອງຂ້ອຍທີ່ອາດຊ່ອຍເຫລືອເຈົ້າໄດ້ ສິ່ງນັ້ນເປັນໂກຣະບານ"' (ຄືເປັນຂອງຖວາຍໄຫວ້ແລ້ວ),
12ເຈົ້າທັງຫລາຍກໍບໍ່ອະນຸຍາດໃຫ້ຜູ້ນັ້ນເຮັດສິ່ງໃດຕໍ່ໄປ ເພື່ອຊ່ອຍບຳລຸງບິດາມານດາຂອງຕົນ.
13ເຈົ້າທັງຫລາຍຈຶ່ງລຶບລ້າງພຣະທຳຂອງພຣະເຈົ້າດ້ວຍຄຳສອນທີ່ຕົກທອດສືບຕໍ່ກັນມາແລະ
ສອນຕໍ່ໆ ກັນໄປ ແລະການອື່ນໆ ແນວນີ້ອີກຫລາຍຢ່າງເຈົ້າທັງຫລາຍກໍເຮັດຢູ່."

## ສິ່ງທີ່ເຮັດໃຫ້ມະນຸດຊົ່ວມົວໝອງ

*(ມທ 15:10-20)*

14ແລ້ວພຣະອົງຊົງເອີ້ນປະຊາຊົນມາອີກ ຊົງກ່າວແກ່ເຂົາວ່າ, "ທ່ານທັງຫລາຍຈົ່ງຟັງເຮົາ
ແລະເຂົ້າໃຈສາ. 15ບໍ່ມີສິ່ງໃດທີ່ຢູ່ພາຍນອກ ເມື່ອເຂົ້າພາຍໃນມະນຸດຈະເຮັດໃຫ້ມະນຸດຊົ່ວມົວ
ໝອງໄດ້ ແຕ່ສິ່ງຊຶ່ງອອກມາຈາກພາຍໃນມະນຸດນັ້ນແຫລະ, ເຮັດໃຫ້ມະນຸດຊົ່ວມົວໝອງ.
16[ຖ້າຜູ້ໃດມີຫູຢາກຟັງໃຫ້ຟັງເອົາສາ.]"

17ຄັນພຣະອົງໄດ້ສະເດັດຈາກປະຊາຊົນເຂົ້າໄປໃນເຮືອນແລ້ວ ພວກສາວົກໄດ້ທູນຖາມພຣະ-
ອົງເຖິງຄຳອຸປະມານັ້ນ. 18ພຣະອົງຊົງຕອບເຂົາວ່າ, "ເຖິງພວກທ່ານກໍຍັງຂາດຄວາມເຂົ້າໃຈ
ເໝືອນກັນຫລື ພວກທ່ານບໍ່ໄດ້ສັງເກດຫລືວ່າ ສິ່ງໃດແຕ່ພາຍ ນອກທີ່ເຂົ້າໄປພາຍໃນມະນຸດ
ຈະເຮັດໃຫ້ມະນຸດເປັນຊົ່ວມົວໝອງບໍ່ໄດ້. 19ເພາະວ່າສິ່ງນັ້ນບໍ່ໄດ້ເຂົ້າໄປໃນໃຈ ແຕ່ລົງທ້ອງ
ແລ້ວກໍຖ່າຍອອກ" (ທີ່ຊົງສອນຢ່າງນີ້ກໍເປັນການປະກາດວ່າ ອາຫານທຸກຢ່າງເປັນຂອງສະ-
ອາດ). 20ພຣະອົງຊົງກ່າວວ່າ, "ສິ່ງທີ່ອອກມາຈາກພາຍໃນມະນຸດນັ້ນແຫລະ, ເຮັດໃຫ້ມະນຸດ
ຊົ່ວມົວໝອງ. 21ເພາະວ່າຈາກພາຍໃນ ຄືຈາກຈິດໃຈມະນຸດມີຄວາມຄຶດຊົ່ວບໍ່ດີ, ການຜິດຊາຍ
ຍິງ, ການລັກຊັບ, ການຂ້າຄົນ, 22ການຫລິ້ນຊູ້ຈາກຜົວເມຍ, ການໂລບ, ການອະທຳ, ການລໍ້
ລວງ, ລາຄະຕັນຫາ, ການອິດສາ, ການນິນທາ, ຄວາມຈອງຫອງ. ຄວາມໂງ່ທີ່ປ່ອຍຕົວໄປ
ຕາມລຳພັງໃຈ. 23ສາລະພັດການຊົ່ວເຫລົ່ານີ້ເກີດມາຈາກພາຍໃນ ແລະເຮັດໃຫ້ມະນຸດຊົ່ວມົວ
ໝອງ."

## ຄວາມເຊື່ອຂອງຍິງຊີເຣຍ-ຟອຍນີເກ

*(ມທ 15:21-28)*

24ພຣະອົງຊົງລຸກຂຶ້ນຈາກທີ່ນັ້ນ ສະເດັດໄປຍັງເຂດແດນເມືອງຕີເຣ ແລ້ວເຂົ້າໄປໃນເຮືອນ
ຫລັງໜຶ່ງໂດຍມີພຣະປະສົງວ່າຈະບໍ່ໃຫ້ຜູ້ໃດຮູ້ ແຕ່ຊົງລີ້ຢູ່ບໍ່ໄດ້. 25ໃນທັນໃດນັ້ນຍິງຄົນໜຶ່ງຊຶ່ງມີ
ລູກສາວທີ່ຜີຖ່ອຍຮ້າຍເຂົ້າສິງ ເມື່ອນາງໄດ້ຍິນຂ່າວເຖິງເລື່ອງພຣະອົງ ກໍມາຂາບລົງທີ່ພຣະ-
ບາດຂອງພຣະອົງ. 26ຍິງຄົນນັ້ນເປັນຊາວກຣີກ ເກີດໃນແຂວງຊີເຣຍ-ຟອຍນີເກ ນາງໄດ້ທູນ
ອ້ອນວອນຂໍໃຫ້ພຣະອົງຂັບໄລ່ຜີອອກຈາກລູກສາວຂອງຕົນ. 27ຝ່າຍພຣະເຢຊູຊົງກ່າວແກ່ນາງ
ນັ້ນວ່າ, "ໃຫ້ລູກກິນອີ່ມເສຍກ່ອນ ເພາະວ່າບໍ່ສົມຄວນຈະເອົາອາຫານຂອງລູກໂຍນໃຫ້ໝາ-
ນ້ອຍ." 28ແຕ່ນາງທູນຕອບວ່າ, "ຈິງຢູ່ຂ້ານ້ອຍ ແຕ່ເຖິງແມ່ນໝານ້ອຍທີ່ຢູ່ໃຕ້ໂຕະ ກໍເຄີຍກິນ
ເສດອາຫານຂອງເດັກນ້ອຍນັ້ນ." 29ແລ້ວພຣະອົງຊົງກ່າວແກ່ນາງວ່າ, "ເພາະເຫດຄຳເວົ້າຂອງ

ເຈົ້ານີ້ ຈົ່ງກັບເມືອສາ ຜີຮ້າຍໄດ້ອອກຈາກລູກສາວຂອງເຈົ້າແລ້ວ.” 30ຝ່າຍຍິງນັ້ນໄດ້ກັບເມືອ
ເຮືອນຂອງຕົນ ກໍເຫັນລູກນອນຢູ່ເທິງຕຽງແລະຜີຮ້າຍນັ້ນກໍໄດ້ອອກແລ້ວ.

## ພຣະເຢຊູຊົງໂຜດຄົນຫູໜວກປາກກືກ

31ຕໍ່ມາພຣະອົງໄດ້ສະເດັດຈາກເຂດເມືອງຕີເຣ ແລະຜ່ານຊີດົນ ດຳເນີນໄປຕາມແຂວງເດ-
ກາໂປລີມາຍັງທະເລຄາລີເລ. 32ມີຄົນໄດ້ພາຊາຍຫູໜວກປາກກືກຄົນໜຶ່ງມາຫາພຣະອົງ ແລ້ວ
ຂໍໃຫ້ພຣະອົງຊົງໂຜດວາງພຣະຫັດເທິງຄົນນັ້ນ. 33ພຣະອົງຈຶ່ງຊົງພາຄົນນັ້ນອອກຈາກປະຊາຊົນ
ໄປຢູ່ຕ່າງຫາກ ຊົງເອົານິ້ວພຣະຫັດແຍ່ຫູຊາຍຄົນນັ້ນທັງສອງກ້ຳ ແລະຊົງບ້ວນນ້ຳລາຍໃສ່ນິ້ວ
ພຣະຫັດແປະລີ້ນຄົນນັ້ນ. 34ແລ້ວພຣະອົງຊົງແຫງນພຣະພັກສູ່ຟ້າ ຊົງຖອນພຣະໄທກ່າວແກ່ຄົນ
ນັ້ນວ່າ, “ເອບຟາທາ” ແປວ່າ “ຈົ່ງໄຂອອກ”. 35ແລ້ວຫູຄົນນັ້ນກໍໄຂອອກ ແລະສິ່ງທີ່ຂັດລີ້ນກໍ
ຫລຸດ ແລະລາວກໍປາກໄດ້ຄັກ. 36ພຣະອົງຊົງຫ້າມຄົນທັງຫລາຍບໍ່ໃຫ້ແຈ້ງຄວາມນີ້ໃຫ້ແກ່ຜູ້ໃດ
ແຕ່ພຣະອົງຊົງຫ້າມເທົ່າໃດ ເຂົາກໍແຮ່ງເລົ່າລືໄປຫລາຍ. 37ແລະຄົນທັງປວງກໍງຶດປະຫລາດໃຈ
ເຫລືອເກີນ ຈຶ່ງເວົ້າກັນວ່າ, “ທ່ານຜູ້ນີ້ໄດ້ເຮັດລ້ວນແຕ່ເປັນການດີ ເຖິງແມ່ນຄົນຫູໜວກກໍເຮັດ
ໃຫ້ໄດ້ຍິນ ແລະຄົນປາກກືກກໍເຮັດໃຫ້ປາກໄດ້.”

# ບົດທີ 8

## ຊົງລ້ຽງຄົນສີ່ພັນ

*(ມທ 15:32-39)*

1ຄາວນັ້ນເມື່ອປະຊາຊົນຫລວງຫລາຍພາກັນມາອີກ ກໍບໍ່ມີອາຫານກິນ ພຣະເຢຊູຈຶ່ງຊົງເອີ້ນ
ພວກສາວົກ ຊົງກ່າວແກ່ເຂົາວ່າ, 2“ເຮົາສົງສານຄົນເຫລົ່ານີ້ເພາະເຂົາຄ້າງຢູ່ກັບເຮົາໄດ້ສາມວັນ
ແລ້ວ ແລະບໍ່ມີອາຫານກິນ. 3ຖ້າເຮົາຈະໃຫ້ເຂົາກັບເມືອບ້ານເມື່ອຍັງທິວຢູ່ ເຂົາຄົງຈະເມື່ອຍອິດ
ອ່ອນຕາມທາງ ເພາະບາງຄົນມາແຕ່ໄກ.” 4ພວກສາວົກຈຶ່ງທູນຕອບພຣະອົງວ່າ, “ໃນປ່າຢ່າງນີ້
ຈະເອົາອາຫານມາແຕ່ໃສພໍຈະໃຫ້ເຂົາກິນອີ່ມໄດ້.” 5ພຣະອົງຊົງຖາມເຂົາວ່າ, “ພວກທ່ານມີເຂົ້າ-
ຈີ່ຈັກກ້ອນ ເຂົາທູນຕອບວ່າ, “ມີເຈັດກ້ອນຂ້ານ້ອຍ.” 6ພຣະອົງຈຶ່ງຊົງສັ່ງປະຊາຊົນໃຫ້ນັ່ງລົງ
ຕາມໜ້າດິນ ເມື່ອຊົງຮັບເຂົ້າຈີ່ເຈັດກ້ອນມາໂມທະນາພຣະຄຸນແລ້ວ ກໍຊົງຫັກຍື່ນໃຫ້ພວກສາວົກ
ໄປແຈກ ພວກສາວົກຈຶ່ງເອົາໄປແຈກໃຫ້ປະຊາຊົນ. 7ແລະເຂົາມີປານ້ອຍບາງໂຕ ພຣະອົງຈຶ່ງ
ຊົງຂໍພຣະພອນແລ້ວຊົງສັ່ງພວກສາວົກໃຫ້ເອົາປານັ້ນໄປແຈກເໝືອນກັນ ຄົນທັງປວງໄດ້ກິນຈົນ
ອີ່ມ. 8ສ່ວນຕ່ອນຫັກທີ່ເຫລືອນັ້ນ ເຂົາເກັບໄດ້ເຕັມເຈັດບຸງ. 9ຄົນທີ່ໄດ້ກິນນັ້ນມີປະມານສີ່ພັນຄົນ
ແລ້ວພຣະອົງຊົງສັ່ງເຂົາໃຫ້ເລີກໄປ. 10ໃນທັນໃດນັ້ນພຣະອົງກໍສະເດັດລົງເຮືອກັບພວກສາວົກ
ຂອງພຣະອົງ ມາເຖິງເຂດເມືອງດານມານຸທາ.

## ພວກຟາຣີຊາຍຂໍການໝາຍສຳຄັນ

*(ມທ 16:1-4)*

11ພວກຟາຣີຊາຍໄດ້ອອກມາຕັ້ງຕົ້ນໂຕ້ຖຽງກັບພຣະອົງ ຂໍໃຫ້ພຣະອົງຊົງສະແດງໝາຍສຳ-
ຄັນຢ່າງໜຶ່ງຈາກສະຫວັນ ເພື່ອຢາກທົດລອງພຣະອົງ. 12ພຣະອົງຊົງຖອນພຣະໄທແລ້ວກ່າວ

ວ່າ, "ເປັນຫຍັງຄົນສະໄໝນີ້ຈຶ່ງສະແຫວງຫາໝາຍສຳຄັນ ເຮົາບອກເຈົ້າທັງຫລາຍຕາມຄວາມ
ຈິງວ່າ ຈະບໍ່ຊົງໂຜດໝາຍສຳຄັນໃຫ້ແກ່ຄົນສະໄໝນີ້." 13ແລ້ວພຣະອົງສະເດັດຈາກເຂົາລົງເຮືອ
ຂ້າມຟາກໄປອີກ.

## ເຊື້ອແປ້ງຂອງພວກຟາຣີຊາຍແລະຂອງພວກເຮໂລດ

*(ມທ 16:5-12)*

14ຝ່າຍພວກສາວົກໄດ້ລືມເອົາເຂົ້າຈີ່ໄປ ແລະໃນເຮືອເຂົາມີເຂົ້າຈີ່ຢູ່ກ້ອນດຽວເທົ່ານັ້ນ.
15ພຣະອົງຊົງຕັກເຕືອນເຂົາວ່າ, "ຈົ່ງສັງເກດ ແລະລະວັງເຊື້ອແປ້ງຂອງພວກຟາຣີຊາຍ ແລະ
ຂອງເຮໂຣດໃຫ້ດີ." 16ພວກສາວົກຈຶ່ງເວົ້າກັນຢູ່ວ່າ, "ເຫັນຈະເປັນເພາະເຮົາບໍ່ມີເຂົ້າຈີ່."
17ພຣະເຢຊູຊົງຊາບເລື່ອງນັ້ນຈຶ່ງຊົງຖາມເຂົາວ່າ, "ເຫດສັນໃດພວກທ່ານຈຶ່ງເວົ້າກັນເຖິງເລື່ອງບໍ່
ມີເຂົ້າຈີ່ ພວກທ່ານຍັງບໍ່ສັງເກດແລະບໍ່ເຂົ້າໃຈຫລື ໃຈຂອງພວກທ່ານຍັງປຶກຕັນຢູ່ຫລື. 18ມີຕາ
ແລ້ວຍັງບໍ່ເຫັນຫລື ມີຫູແລ້ວຍັງບໍ່ໄດ້ຍິນຫລື ພວກທ່ານຈື່ຈຳບໍ່ໄດ້ຫລື. 19ເມື່ອເຮົາຫັກເຂົ້າຈີ່ຫ້າ
ກ້ອນໃຫ້ແກ່ຫ້າພັນຄົນນັ້ນ ພວກທ່ານເກັບສ່ວນທີ່ເຫລືອນັ້ນໄດ້ເຕັມເຈັດບຸງ" ເຂົາທູນຕອບວ່າ,
"ໄດ້ສິບສອງບຸງຂ້ານ້ອຍ." 20"ເມື່ອເຮົາໄດ້ຫັກເຂົ້າຈີ່ເຈັດກ້ອນໃຫ້ແກ່ຄົນສີ່ພັນນັ້ນ ພວກທ່ານ
ເກັບສ່ວນທີ່ເຫລືອນັ້ນໄດ້ເຕັມຈັກບຸງ" ເຂົາທູນຕອບວ່າ, "ໄດ້ເຈັດບຸງຂ້ານ້ອຍ." 21ພຣະອົງຈຶ່ງ
ຊົງກ່າວແກ່ເຂົາວ່າ, "ພວກທ່ານຍັງບໍ່ເຂົ້າໃຈຫລື."

## ພຣະເຢຊູຊົງໂຜດຄົນຕາບອດທີ່ເມືອງເບັດຊາອີດາ

22ພຣະອົງໄດ້ສະເດັດໄປຍັງເມືອງເບັດຊາອີດາກັບພວກສາວົກ ຊາວເມືອງນັ້ນພາຄົນຕາ-
ບອດຜູ້ໜຶ່ງມາຫາພຣະອົງ ທູນອ້ອນວອນຂໍໃຫ້ພຣະອົງຊົງບາຍຄົນນັ້ນ. 23ພຣະອົງໄດ້ຊົງກຳມື
ຄົນຕາບອດຈູງລາວອອກໄປນອກເມືອງ ເມື່ອຊົງຖົ່ມນໍ້າລາຍໃສ່ຕາຄົນນັ້ນແລະຢຽດພຣະຫັດໃສ່
ລາວແລ້ວຊົງຖາມວ່າ, "ເຈົ້າເຫັນຫຍັງແດ່ບໍ່?". 24ຄົນນັ້ນເງີຍໜ້າເບິ່ງແລ້ວທູນຕອບວ່າ, "ຂ້າ-
ນ້ອຍເຫັນຄົນຍ່າງໄປມາ ແຕ່ເບິ່ງເໝືອນຕົ້ນໄມ້." 25ພຣະອົງຊົງຢຽດພຣະຫັດໃສ່ຕາລາວອີກ
ລາວກໍມືນຕາເຕັມໜ່ວຍແລະຕາລາວກໍດີປົກກະຕິ ຈຶ່ງເຫັນທຸກສິ່ງໄດ້ຄັກ. 26ພຣະອົງຈຶ່ງຊົງໃຫ້
ລາວກັບເມືອເຮືອນຂອງຕົນ ແລ້ວຊົງສັ່ງວ່າ, "ຢ່າໄດ້ເຂົ້າໄປໃນເມືອງເນີ."

## ເປໂຕຮັບວ່າພຣະເຢຊູຊົງເປັນພຣະຄຣິດ

*(ມທ 16:13-20; ລກ 9:18-21)*

27ພຣະເຢຊູໄດ້ສະເດັດພ້ອມດ້ວຍພວກສາວົກ ອອກໄປຍັງບ້ານທັງຫລາຍເຂດເມືອງກາຍ-
ຊາເຣຍຟີລິບປອຍ ເມື່ອຢູ່ຕາມທາງນັ້ນ ພຣະອົງຊົງຖາມພວກສາວົກວ່າ, "ຄົນທັງຫລາຍເວົ້າ
ກັນວ່າເຮົາແມ່ນຜູ້ໃດ." 28ເຂົາທູນຕອບວ່າ, "ຜູ້ລາງຄົນວ່າແມ່ນໂຢຮັນບັບຕິສະໂຕ ແຕ່ຄົນອື່ນ
ວ່າແມ່ນເອລີຢາ ແລະຄົນອື່ນອີກວ່າແມ່ນຜູ້ໜຶ່ງໃນພວກຜູ້ປະກາດພຣະທຳ." 29ພຣະອົງຊົງຖາມ
ເຂົາວ່າ, "ພວກທ່ານເດ ວ່າເຮົາແມ່ນໃຜ" ເປໂຕທູນຕອບວ່າ, "ທ່ານແມ່ນພຣະຄຣິດ." 30ແລ້ວ
ພຣະອົງຊົງສັ່ງຫ້າມພວກສາວົກດ້ວຍເດັດຂາດ ບໍ່ໃຫ້ເຂົາບອກເລື່ອງນີ້ແກ່ຜູ້ໃດ.

## ພຣະເຢຊູຊົງທຳນວາຍເຖິງມໍລະນະພາບຂອງພຣະອົງ

*(ມທ 16:21-28; ລກ 9:22-27)*

31ແລ້ວພຣະອົງຊົງຕັ້ງຕົ້ນກ່າວສອນພວກສາວົກວ່າ, “ບຸດມະນຸດຈະຕ້ອງທົນທຸກທໍລະມານ
ຫລາຍປະການ ພວກເຖົ້າແກ່, ພວກປະໂລຫິດຕົນໃຫຍ່, ແລະພວກນັກທຳຈະບໍ່ຍອມຮັບ ເຂົາ
ຈະໄດ້ຂ້າເພິ່ນເສຍແລະໃນວັນຖ້ວນສາມເພິ່ນຈະຖືກຊົງບັນດານໃຫ້ເປັນຄືນມາ.” 32ຄຳເຫລົ່ານີ້
ພຣະອົງຊົງກ່າວໂດຍເປີດເຜີຍ ຝ່າຍ ເປໂຕ ໄດ້ພາພຣະອົງໄປຕ່າງຫາກ ແລ້ວຕັ້ງຕົ້ນທູນຫ້າມ
ພຣະອົງຢ່າງ ແຂງແຮງ. 33ເມື່ອພຣະອົງຊົງຫັນພຣະພັກເຫັນພວກສາວົກ ກໍຊົງຕິ ເປໂຕ ຢ່າງ
ແຂງແຮງວ່າ, “ອ້າຍ ຊາຕານ ເອີຍ, ຈົ່ງຖອຍໜີຈາກເຮົາເສຍ ເພາະເຈົ້າຄຶດຢ່າງມະນຸດ ບໍ່ຄຶດ
ຢ່າງ ພຣະເຈົ້າ.”

34ພຣະອົງຈິ່ງຊົງ ເອີ້ນປະຊາຊົນກັບພວກສາວົກເຂົ້າມາ ແລ້ວຊົງກ່າວແກ່ເຂົາວ່າ, “ຖ້າຜູ້ໃດ
ຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສຍ ແລະຮັບແບກໄມ້ກາງແຂນຂອງຕົນຕິດຕາມ
ເຮົາມາ. 35ເພາະວ່າຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສຍຊີວິດ ແຕ່ຜູ້ໃດຈະເສຍຊີ-
ວິດ ຂອງ ຕົນ ເພາະ ເຫັນແກ່ ເຮົາ ແລະ ເຫັນແກ່ຂ່າວປະເສີດ ຜູ້ນັ້ນກໍຈະຊ່ອຍ ຊີວິດ ໃຫ້ພົ້ນ.
36ເພາະຖ້າຜູ້ໃດຈະໄດ້ສິ່ງຂອງໝົດທັງໂລກ ແຕ່ຕ້ອງເສຍຊີວິດອັນແທ້ຂອງຕົນ ຜູ້ນັ້ນຈະໄດ້
ປະໂຫຍດອັນໃດ. 37ຫລືຜູ້ນັ້ນຈະນຳເອົາສິ່ງໃດໄປແລກເອົາຊີວິດອັນແທ້ຂອງຕົນກັບຄືນມາ.
38ດ້ວຍວ່າຖ້າຜູ້ໃດມີຄວາມອາຍເພາະເຮົາແລະຖ້ອຍຄຳຂອງເຮົາໃນຊົ່ວຊີວິດນີ້ ຊຶ່ງປະກອບດ້ວຍ
ການບໍ່ສັດຊື່ ແລະຊົ່ວຮ້າຍ ບຸດມະນຸດກໍຈະມີຄວາມອາຍເພາະຜູ້ນັ້ນ ໃນເມື່ອເພິ່ນມາດ້ວຍສະ-
ຫງ່າລາສີແຫ່ງ ພຣະບິດາ ແລະດ້ວຍຝູງເທວະດາຕົນບໍລິສຸດ.”

# ບົດທີ 9

1ພຣະອົງຍັງຊົງກ່າວແກ່ເຂົາວ່າ, “ເຮົາບອກພວກເຈົ້າຕາມຄວາມຈິງວ່າ ໃນພວກຄົນທີ່ຢືນຢູ່
ທີ່ນີ້ມີລາງຄົນທີ່ຈະບໍ່ຮູ້ລົດຄວາມຕາຍ ຈົນກວ່າຈະໄດ້ເຫັນລາຊະອານາຈັກຂອງ ພຣະເຈົ້າ ມາ
ດ້ວຍລິດເດດ.”

## ຊົງປ່ຽນລັກສະນະພຣະກາຍ

*(ມທ 17:1-13; ລກ 9:28-36)*

2ຄັນລ່ວງໄປໄດ້ຫົກວັນ ພຣະເຢຊູຊົງພາ ເປໂຕ, ຢາໂກໂບ, ແລະ ໂຢຮັນ ຂຶ້ນພູສູງຈຳເພາະ
ແຕ່ໝູ່ດຽວ ແລ້ວລັກສະນະພຣະກາຍຂອງພຣະອົງກໍປ່ຽນໄປຕໍ່ໜ້າເຂົາ. 3ແລະເຄື່ອງທົງຂອງ
ພຣະອົງກໍເກີດຮຸ່ງເຮືອງຂາວເຫລື້ອມຍັບໆ ຈະຫາຊ່າງຟອກຜ້າທົ່ວແຜ່ນດິນໂລກຟອກໃຫ້ຂາວ
ຢ່າງນັ້ນກໍບໍ່ໄດ້. 4ແລ້ວ ເອລີຢາກັບ ໂມເຊກໍປະກົດແກ່ສາວົກພວກນັ້ນ ແລະເຝົ້າສົນທະນາຢູ່ກັບ
ພຣະເຢຊູ. 5ຝ່າຍ ເປໂຕ ທູນ ພຣະເຢຊູວ່າ, “ພຣະອາຈານເອີຍ, ຊຶ່ງພວກຂ້ານ້ອຍຢູ່ນີ້ກໍດີຢູ່ ໃຫ້
ພວກຂ້າພາກັນປຸກຕູບສາມຫລັງ ສຳລັບທ່ານຫລັງໜຶ່ງ, ສຳລັບ ໂມເຊຫລັງໜຶ່ງ, ແລະຫລັງໜຶ່ງ
ສຳລັບ ເອລີຢາ.” 6ທີ່ ເປໂຕ ເວົ້າຢ່າງນັ້ນກໍເພາະບໍ່ຮູ້ຈະວ່າຢ່າງໃດ ດ້ວຍວ່າພວກເຂົາເກີດມີ
ຄວາມຢ້ານເຕັມທີ. 7ແລ້ວມີເມກມາປົກຫຸ້ມເຂົາໄວ້ ແລະມີພຣະສຸລະສຽງອອກມາຈາກເມກນັ້ນ

ວ່າ, "ທ່ານຜູ້ນີ້ແຫລະ, ເປັນບຸດທີ່ຮັກຂອງເຮົາ ພວກເຈົ້າຈົ່ງເຊື່ອຟັງເພິ່ນ." 8ໃນບັດດຽວນັ້ນ
ເມື່ອເຂົາຫລຽວເບິ່ງອ້ອມກໍບໍ່ເຫັນຜູ້ໃດ ເຫັນແຕ່ພຣະເຢຊູຜູ້ດຽວຊົງຢູ່ກັບເຂົາ.
9ເມື່ອເຂົາກຳລັງລົງມາຈາກພູນັ້ນ ພຣະອົງຊົງຫ້າມພວກສາວົກບໍ່ໃຫ້ນຳສິ່ງທີ່ເຂົາໄດ້ເຫັນນັ້ນ
ໄປບອກແກ່ຜູ້ໃດ ຈົນກວ່າບຸດມະນຸດຈະໄດ້ເປັນຄືນມາຈາກຕາຍ. 10ຂໍ້ຄວາມສັ່ງນັ້ນພວກສາວົກ
ກໍຖືຮັກສາໄວ້ ແຕ່ລະຫວ່າງເຂົາມີການຊັກຖາມກັນວ່າທີ່ຊົງກ່າວວ່າ, "ຈະເປັນຄືນມາຈາກຕາຍ"
ນັ້ນຈະໝາຍຄວາມວ່າຢ່າງໃດ.
11ເຂົາຈຶ່ງທູນຖາມພຣະອົງວ່າ, "ເຫດສັນໃດພວກນັກທຳເຄີຍເວົ້າວ່າ ເອລີຢາຈະຕ້ອງມາ
ກ່ອນ." 12ພຣະອົງຊົງຕອບເຂົາວ່າ, "ຈິງຢູ່ ເອລີຢາຈະມາກ່ອນ ແລະເຮັດໃຫ້ສິ່ງທັງປວງຄືນສູ່
ສະພາບເດີມ ແລະເປັນແນວໃດມີຄຳຊຽນໄວ້ເຖິງບຸດມະນຸດນັ້ນວ່າເພິ່ນຈະຕ້ອງທົນທຸກທໍລະ-
ມານຫລາຍປະການແລະຖືກການໝິ່ນປະໝາດ. 13ແຕ່ເຮົາບອກພວກທ່ານວ່າ ເອລີຢານັ້ນໄດ້
ມາແລ້ວ ແລະເຂົາເຮັດແກ່ເພິ່ນຕາມໃຈຊອບ ຕາມທີ່ມີຄຳຊຽນກ່າວໄວ້ເຖິງເພິ່ນ."

## ພຣະເຢຊູຊົງໂຜດເດັກນ້ອຍທີ່ຜີເຂົ້າສິງ

*(ມທ 17:14-21; ລກ 9:37-43)*

14ເມື່ອພຣະອົງສະເດັດມາພ້ອມກັບສາວົກສາມຄົນນັ້ນ ກໍມາເຖິງພວກສາວົກທັງຫລາຍ ຈຶ່ງ
ເຫັນປະຊາຊົນຈຳນວນຫລາຍອ້ອມຮອບເຂົາຢູ່ ແລະພວກນັກທຳກໍກຳລັງໂຕ້ຖຽງກັບເຂົາ. 15ໃນ
ທັນໃດນັ້ນເມື່ອປະຊາຊົນເຫັນພຣະອົງກໍງຶດປະລາດໃຈຫລາຍ ຈຶ່ງແລ່ນເຂົ້າມາໂຄລົບພຣະອົງ.
16ພຣະອົງຈຶ່ງຊົງຖາມເຂົາວ່າ, "ພວກເຈົ້າໂຕ້ຖຽງກັນເຖິງເລື່ອງອັນໃດ." 17ມີຄົນໜຶ່ງໃນໝູ່ປະ-
ຊາຊົນທູນຕອບພຣະອົງວ່າ, "ອາຈານເອີຍ, ຂ້ານ້ອຍໄດ້ພາລູກຊາຍມາຫາທ່ານ ເພາະຜີປາກ-
ກືກເຂົ້າສິງມັນ. 18ລູກນັ້ນຈະຢູ່ບ່ອນໃດກໍຕາມ ເມື່ອຜີສະແດງກໍເຮັດໃຫ້ມັນລົ້ມຊັກດີ້ນໄປ ມີອາ-
ການນ້ຳລາຍຟູມປາກແລະຂົບແຂ້ວ ແລ້ວຕົວແຂງໄປ ຂ້ານ້ອຍໄດ້ຂໍໃຫ້ພວກສາວົກຂອງທ່ານ
ຂັບໄລ່ຜີນັ້ນອອກເສຍ ແຕ່ເຂົາບໍ່ສາມາດ." 19ພຣະອົງຊົງກ່າວແກ່ເຂົາວ່າ, "ໂອ ຄົນໃນສະໄໝ
ທີ່ຂາດຄວາມເຊື່ອເອີຍ, ເຮົາຈະຕ້ອງຢູ່ກັບພວກເຈົ້າເຫິງປານໃດ ເຮົາຈະຕ້ອງອົດທົນນຳພວກ
ເຈົ້ານານປານໃດ ຈົ່ງພາມັນມາຫາເຮົາສາ." 20ເຂົາກໍພາເດັກນ້ອຍນັ້ນມາຫາພຣະອົງ ເມື່ອຜີ
ເຫັນພຣະອົງແລ້ວ ໃນທັນໃດນັ້ນມັນກໍເຮັດໃຫ້ເດັກນ້ອຍລົ້ມລົງກິ້ງເກືອກແລະມີນ້ຳລາຍຟູມປາກ.
21ພຣະອົງຈຶ່ງຊົງຖາມພໍ່ນັ້ນວ່າ, "ມັນເປັນຢ່າງນີ້ໄດ້ເຫິງປານໃດແລ້ວ" ພໍ່ທູນຕອບວ່າ, "ຕັ້ງແຕ່
ນ້ອຍພຸ້ນມາຂ້ານ້ອຍ. 22ແລະຜີນັ້ນໄດ້ຊຸກມັນໃສ່ໄຟແລະໃສ່ນ້ຳຫລາຍເທື່ອ ໝາຍຈະຂ້າມັນເສຍ
ແຕ່ຖ້າທ່ານສາມາດຊ່ອຍໄດ້ ຂໍໂຜດສົງສານຊ່ອຍພວກຂ້ານ້ອຍແດ່ທ້ອນ." 23ພຣະເຢຊູຊົງກ່າວ
ແກ່ພໍ່ນັ້ນວ່າ, "ຖ້າຊ່ອຍໄດ້' ຢາກເວົ້າດັ່ງນັ້ນຫລື ທຸກໆ ສິ່ງກໍເປັນໄປໄດ້ສຳລັບຜູ້ທີ່ເຊື່ອ." 24ໃນ
ທັນໃດນັ້ນພໍ່ຂອງເດັກນ້ອຍກໍຮ້ອງທູນຂຶ້ນວ່າ, "ເຊື່ອແລ້ວຂ້ານ້ອຍ ທີ່ຂ້ານ້ອຍຍັງຂາດຄວາມ
ເຊື່ອນັ້ນ ຂໍໂຜດຊ່ອຍຂ້ານ້ອຍແດ່ທ້ອນ."
25ເມື່ອ ພຣະເຢຊູ ຊົງ ເຫັນປະຊາຊົນກຳລັງ ແລ່ນ ເຂົ້າມາ ພຣະອົງຊົງກ່າວຊຳລະຜີຖ່ອຍຮ້າຍ
ນັ້ນວ່າ, "ບັກຜີປາກກືກຫູໜວກເຮີຍ, ເຮົາສັ່ງວ່າ 'ໃຫ້ອອກຈາກມັນເສຍຢ່າໄດ້ກັບເຂົ້າມາອີກຈັກ
ເທື່ອ'." 26ຜີນັ້ນໄດ້ຮ້ອງແຜດສຽງຂຶ້ນ ເຮັດໃຫ້ເດັກນ້ອຍຊັກດີ້ນເຕັມກຳລັງແລ້ວກໍອອກໜີ ເດັກ-

ນ້ອຍນັ້ນກໍກາຍເປັນເໝືອນຄົນຕາຍ ຈົນຄົນສ່ວນຫລາຍເວົ້າວ່າ, "ມັນຕາຍແລ້ວ." 27ແຕ່ພຣະ-
ເຢຊູຊົງຈັບມືເດັກນ້ອຍນັ້ນດຶງຂຶ້ນແລ້ວມັນກໍລຸກຢືນຂຶ້ນ.
28ເມື່ອພຣະອົງສະເດັດກັບເຂົ້າໄປໃນເຮືອນແລ້ວ ພວກສາວົກຂອງພຣະອົງໄດ້ທູນຖາມເປັນ
ສ່ວນຕົວວ່າ, "ເຫດສັນໃດພວກຂ້ານ້ອຍຈຶ່ງຂັບໄລ່ຜີນັ້ນອອກບໍ່ໄດ້." 29ພຣະອົງຊົງຕອບເຂົາວ່າ,
"ຜີແນວນີ້ຈະຂັບໄລ່ອອກດ້ວຍວິທີອື່ນບໍ່ໄດ້ ເວັ້ນແຕ່ດ້ວຍການອ້ອນວອນ."

## ພຣະເຢຊູຊົງກ່າວລ່ວງໜ້າອີກວ່າຈະຖືກຂ້າ

*(ມທ 17:22-23; ລກ 9:43-45)*

30ພຣະອົງສະເດັດອອກຈາກທີ່ນັ້ນພ້ອມດ້ວຍພວກສາວົກ ດຳເນີນຜ່ານແຂວງຄາລີເລໄປແຕ່
ພຣະອົງບໍ່ຊົງປະສົງໃຫ້ຜູ້ໃດຮູ້. 31ເພາະພຣະອົງຊົງສັ່ງສອນພວກສາວົກຢູ່ ຄືຊົງບອກເຂົາວ່າ,
"ບຸດມະນຸດຈະຖືກມອບໄວ້ໃນມືມະນຸດ ເຂົາຈະຂ້າເພິ່ນເສຍ ເມື່ອຂ້າແລ້ວໄດ້ສາມວັນ ເພິ່ນກໍຈະ
ຖືກຊົງບັນດານໃຫ້ເປັນຄືນມາ." 32ແຕ່ຖ້ອຍຄຳນີ້ພວກສາວົກບໍ່ໄດ້ເຂົ້າໃຈ ແຕ່ບໍ່ກ້າຈະທູນຖາມ
ພຣະອົງ.

## ຜູ້ໃດເປັນໃຫຍ່ກວ່າໝູ່

*(ມທ 18:1-5; ລກ 9:46-48)*

33ພຣະອົງຈຶ່ງສະເດັດມາຍັງເມືອງກາເປນາອູມພ້ອມກັບພວກສາວົກ ເມື່ອເຂົ້າໄປໃນເຮືອນ
ແລ້ວ ພຣະອົງໄດ້ຊົງຖາມພວກສາວົກວ່າ, "ເມື່ອມາຕາມທາງນັ້ນ ພວກທ່ານໄດ້ຖົກຖຽງກັນເຖິງ
ເລື່ອງອັນໃດ" ແຕ່ພວກສາວົກໄດ້ມິດຢູ່. 34ເພາະເມື່ອມາຕາມທາງນັ້ນເຂົາໄດ້ຖົກຖຽງກັນວ່າ
ແມ່ນໃຜຈະເປັນໃຫຍ່ກວ່າໝູ່. 35ພຣະເຢຊູໄດ້ປະທັບນັ່ງລົງ ແລ້ວຊົງເອີ້ນພວກສາວົກສິບສອງ
ຄົນນັ້ນມາ ຊົງກ່າວວ່າ, "ຖ້າຜູ້ໃດຢາກເປັນຜູ້ຕົ້ນ ກໍໃຫ້ຜູ້ນັ້ນເປັນຜູ້ປາຍແລະເປັນຜູ້ຮັບໃຊ້ຂອງ
ຄົນທັງປວງ." 36ແລະພຣະອົງຊົງເອົາເດັກນ້ອຍຄົນໜຶ່ງມາໃຫ້ຢືນຢູ່ຖ້າມກາງເຂົາ ແລ້ວຊົງອູ້ມ
ເອົາເດັກນ້ອຍຜູ້ນັ້ນໄວ້ ຊົງກ່າວຕໍ່ພວກສາວົກວ່າ, 37"ຖ້າຜູ້ໃດຈະຮັບເດັກນ້ອຍຜູ້ໜຶ່ງຢ່າງນີ້ໄວ້
ໃນນາມຂອງເຮົາ ຜູ້ນັ້ນກໍໄດ້ຮັບເຮົາ ແລະຜູ້ໃດຮັບເຮົາ ຜູ້ນັ້ນກໍບໍ່ແມ່ນແຕ່ຮັບເຮົາຜູ້ດຽວ ແຕ່ຮັບ
ພຣະອົງຜູ້ຊົງໃຊ້ເຮົາມາ."

## ຜູ້ບໍ່ໄດ້ຕໍ່ສູ້ເຮົາກໍຢູ່ຝ່າຍເຮົາ

*(ລກ 9:49-50)*

38ໂຢຮັນຈຶ່ງທູນພຣະອົງວ່າ, "ອາຈານເອີຍ, ພວກຂ້ານ້ອຍໄດ້ເຫັນຄົນຜູ້ໜຶ່ງຂັບໄລ່ຜີຮ້າຍ
ອອກໃນນາມຂອງທ່ານ ແລະພວກຂ້ານ້ອຍໄດ້ຫ້າມຄົນນັ້ນເສຍ ເພາະເພິ່ນບໍ່ໄດ້ຕິດຕາມພວກ
ຂ້ານ້ອຍ." 39ພຣະເຢຊູຊົງຕອບວ່າ, "ຢ່າຫ້າມເຫາະ ເພາະວ່າບໍ່ມີຜູ້ໃດຈະເຮັດການອິດທິລິດໃນ
ນາມຂອງເຮົາ ແລະພາຍຫລັງມາຈະກັບເວົ້າໝິ່ນປະໝາດເຮົາ. 40ເພາະຜູ້ໃດບໍ່ຕໍ່ສູ້ພວກເຮົາກໍ
ເປັນຝ່າຍເຮົາແລ້ວ. 41ເຮົາບອກທ່ານຕາມຈິງວ່າ ຖ້າຜູ້ໃດຈະເອົານ້ຳຈອກໜຶ່ງໃຫ້ທ່ານດື່ມເພາະ
ທ່ານເປັນຝ່າຍພຣະຄຣິດ ຜູ້ນັ້ນຈະບໍ່ຂາດບຳເໜັດຂອງຕົນຈັກເທື່ອ.

## ການເຮັດໃຫ້ຫລົງຜິດ

*(ມທ 18:6-9; ລກ 17:1-2)*

42"ຖ້າຜູ້ໃດຈະເຮັດໃຫ້ຄົນໜຶ່ງໃນໝູ່ເດັກນ້ອຍເຫລົ່ານີ້ທີ່ເຊື່ອ [ໃນເຮົາ] ຫລົງຜິດ ຖ້າຈະເອົາ
ຫີນໂມ້ກ້ອນໃຫຍ່ຜູກຄໍຜູ້ນັ້ນຖິ້ມລົງນ້ຳທະເລເສຍກໍດີກວ່າ. 43ຖ້າມືຂອງທ່ານເຮັດໃຫ້ຕົນຫລົງຜິດ
ຈົ່ງຕັດຖິ້ມເສຍ ທີ່ຈະເຂົ້າໃນຊີວິດດ້ວຍເສຍອົງຄະ ກໍດີກວ່າມີມືສອງເບື້ອງແລະຕ້ອງຕົກໝໍ້ນະ-
ລົກໃນໄຟທີ່ບໍ່ຮູ້ມອດ. 44[ໃນທີ່ນັ້ນ 'ໂຕໜອນກໍບໍ່ຮູ້ຕາຍ ແລະໄຟກໍບໍ່ຮູ້ມອດ'.] 45ຖ້າຕີນຂອງ
ທ່ານເຮັດໃຫ້ຕົນຫລົງຜິດຈົ່ງຕັດຖິ້ມເສຍ ທີ່ຈະເຂົ້າໃນຊີວິດດ້ວຍຕີນກຸດເບື້ອງໜຶ່ງ ກໍດີກວ່າມີຕີນ
ສອງເບື້ອງແລະຕ້ອງຖືກຖິ້ມລົງໃນໝໍ້ນະລົກ. 46[ໃນທີ່ນັ້ນ 'ໂຕໜອນກໍບໍ່ຮູ້ຕາຍ ແລະໄຟກໍບໍ່ຮູ້
ມອດ'.] 47ຖ້າຕາຂອງທ່ານເຮັດໃຫ້ຕົນຫລົງຜິດຈົ່ງຄວັດອອກເສຍ ທີ່ຈະເຂົ້າໃນລາຊະອານາຈັກ
ຂອງ ພຣະເຈົ້າ ດ້ວຍຕາເບື້ອງດຽວ ກໍດີກວ່າມີຕາສອງເບື້ອງແລະຕ້ອງຖືກຖິ້ມລົງໃນໝໍ້ນະລົກ.
48ໃນທີ່ນັ້ນ 'ໂຕໜອນກໍບໍ່ຮູ້ຕາຍ ແລະໄຟກໍບໍ່ຮູ້ມອດ'. 49"ດ້ວຍວ່າທຸກຄົນຈະຕ້ອງຖືກເອືອບເກືອ
ແລ້ວຊຳລະດ້ວຍໄຟ. 50ເກືອເປັນຂອງດີ ແຕ່ຖ້າເກືອໝົດລົດເຄັມແລ້ວ ຈະເຮັດໃຫ້ກັບເຄັມອີກ
ໄດ້ຢ່າງໃດ ທ່ານທັງຫລາຍຈົ່ງມີເກືອໃນຕົວ ແລະຈົ່ງໃຫ້ມີຄວາມຖືກຕ້ອງປອງດອງກັນເທີ້ນ."

# ບົດທີ 10

## ພຣະເຢຊູຊົງສັ່ງສອນເລື່ອງການຢ່າຮ້າງ

*(ມທ 19:1-12)*

1ຝ່າຍ ພຣະເຢຊູ ໄດ້ຊົງລຸກຈາກທີ່ນັ້ນສະເດັດເຂົ້າໄປໃນເຂດແຂວງຢູດາຍ [ແລະ] ຟາກແມ່-
ນ້ຳຢໍແດນ ເບື້ອງນັ້ນ ແລະປະຊາຊົນພາກັນມາໄຫວ້ພຣະອົງອີກ ພຣະອົງຈຶ່ງຊົງສັ່ງສອນເຂົາ
ຕາມເຄີຍ. 2ພວກ ຟາຣີຊາຍ ໄດ້ມາທູນຖາມເພື່ອທົດລອງພຣະອົງວ່າ, "ຜູ້ຊາຍຈະຢ່າຮ້າງເມຍ
ຂອງຕົນເປັນການຖືກຕ້ອງຕາມກົດບັນຍັດຫລື." 3ພຣະອົງຊົງຍ້ອນຖາມເຂົາອີກວ່າ, "ໂມເຊ ໄດ້
ບັນຍັດໄວ້ຢ່າງໃດ." 4ເຂົາທູນຕອບວ່າ, "ໂມເຊ ໄດ້ອະນຸຍາດໃຫ້ເຮັດໜັງສືຢ່າຮ້າງແລ້ວໃຫ້ປະ
ໄດ້." 5ພຣະເຢຊູ ຊົງຕອບເຂົາວ່າ, "ທີ່ ໂມເຊ ໄດ້ບັນຍັດໄວ້ຢ່າງນັ້ນກໍເພາະໃຈຂອງພວກທ່ານ
ແຂງກະດ້າງ. 6ແຕ່ວ່າຕັ້ງແຕ່ເດີມສ້າງໂລກ 'ພຣະອົງໄດ້ຊົງສ້າງມະນຸດໃຫ້ເປັນຊາຍແລະຍິງ',
7'ດ້ວຍເຫດນັ້ນຜູ້ຊາຍຈຶ່ງລະພໍ່ແມ່ຂອງຕົນ [ໄປຜູກພັນຢູ່ກັບເມຍ]. 8ແລະເຂົາທັງສອງຈະເປັນ
ກາຍອັນດຽວ' ເຂົາຈຶ່ງບໍ່ເປັນສອງຕໍ່ໄປແຕ່ເປັນກາຍອັນດຽວ. 9ເຫດສັນນັ້ນຊຶ່ງ ພຣະເຈົ້າ ໄດ້ຊົງ
ໃຫ້ເຂົ້າຮ່ວມແອກກັນແລ້ວ ຢ່າໃຫ້ມະນຸດເຮັດໃຫ້ພາກຈາກກັນ."

10ເມື່ອເຂົ້າໄປໃນເຮືອນແລ້ວ ພວກສາວົກໄດ້ທູນຖາມພຣະອົງເຖິງເລື່ອງນີ້ອີກ. 11ພຣະອົງຊົງ
ຕອບວ່າ, "ຖ້າຜູ້ໃດປະເມຍຂອງຕົນແລ້ວໄປເອົາເມຍໃໝ່ ຜູ້ນັ້ນກໍຜິດໃນຖານຫລິ້ນຊູ້. 12ແລະ
ຖ້າຍິງໃດປະຜົວຂອງຕົນແລ້ວໄປເອົາຜົວໃໝ່ ຍິງນັ້ນກໍຜິດໃນຖານຫລິ້ນຊູ້ເໝືອນກັນ."

## ພຣະເຢຊູຊົງອວຍພຣະພອນເດັກນ້ອຍ

*(ມທ 19:13-15; ລກ 18:15-17)*

13ແລະເຂົາໄດ້ອູ້ມເດັກນ້ອຍມາຫາພຣະອົງ ເພື່ອຈະໃຫ້ພຣະອົງຊົງຢຽດພຣະຫັດໃສ່ເຂົາ ແຕ່

ພວກສາວົກໄດ້ຫ້າມປາມເຂົາໄວ້. 14ເມື່ອ ພຣະເຢຊູ ຊົງເຫັນດັ່ງນັ້ນກໍເຄືອງພຣະໄທ ຈຶ່ງຊົງກ່າວ
ແກ່ພວກສາວົກວ່າ, "ຈົ່ງປ່ອຍໃຫ້ເດັກນ້ອຍເຂົ້າມາຫາເຮົາ ຢ່າຫ້າມເຂົາ ເພາະວ່າລາຊະແຜ່ນ-
ດິນຂອງ ພຣະເຈົ້າ ເປັນຂອງ[ກ] ຄົນຢ່າງນີ້ແຫລະ. 15ເຮົາບອກທ່ານທັງຫລາຍຕາມຈິງວ່າ ຖ້າຜູ້
ໃດບໍ່ຮັບລາຊະແຜ່ນດິນຂອງ ພຣະເຈົ້າ ເໝືອນດັ່ງເດັກນ້ອຍ ຜູ້ນັ້ນຈະເຂົ້າໃນລາຊະແຜ່ນດິນນັ້ນ
ບໍ່ໄດ້ຈັກເທື່ອ." 16ແລ້ວພຣະອົງຊົງອູ້ມເດັກນ້ອຍເຫລົ່ານັ້ນຢຽດພຣະຫັດໃສ່ແລະອວຍພອນໃຫ້
ເຂົາ.

## ເລື່ອງມະຫາເສດຖີ

*(ມທ 19:16-30; ລກ 18:18-30)*

17ເມື່ອພຣະອົງສະເດັດອອກໄປກາງທາງ ມີຄົນໜຶ່ງແລ່ນມາຫາພຣະອົງຄຸເຂົ່າລົງທູນຖາມ
ພຣະອົງວ່າ, "ອາຈານຜູ້ປະເສີດເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຈຶ່ງຈະໄດ້ຮັບຊີວິດອັນຕະ-
ຫລອດໄປເປັນນິດມາເປັນມໍລະດົກ." 18ພຣະເຢຊູ ຊົງຕອບວ່າ "ເປັນຫຍັງທ່ານຈຶ່ງເອີ້ນເຮົາວ່າຜູ້
ປະເສີດ ບໍ່ມີໃຜປະເສີດ ເວັ້ນແຕ່ ພຣະເຈົ້າ ອົງດຽວເທົ່ານັ້ນ. 19ທ່ານຮູ້ຈັກຂໍ້ພຣະບັນຍັດແລ້ວວ່າ
'ຢ່າຂ້າຄົນ, ຢ່າມິດສາຈານຈາກຜົວຈາກເມຍ, ຢ່າລັກຊັບ, ຢ່າເປັນພະຍານບໍ່ຈິງ, ຢ່າສໍ້ໂກງ,
ຈົ່ງນັບຖືບິດາມານດາຂອງຕົນ'." 20ຄົນນັ້ນໄດ້ທູນຕອບວ່າ, "ອາຈານເອີຍ, ຂໍ້ເຫລົ່ານັ້ນຂ້ານ້ອຍ
ໄດ້ຮັກສາໄວ້ຕັ້ງແຕ່ເປັນເດັກນ້ອຍມາ." 21ພຣະເຢຊູ ເພ່ງເບິ່ງຜູ້ນັ້ນກໍຊົງຮັກເພິ່ນແລ້ວຊົງກ່າວວ່າ,
"ທ່ານຍັງຂາດຢູ່ສິ່ງໜຶ່ງ ຄືຈົ່ງໄປຂາຍບັນດາສິ່ງຂອງຊຶ່ງທ່ານມີຢູ່ແຈກທານແກ່ຄົນອະນາຖາ
ແລ້ວທ່ານຈະມີຊັບສົມບັດໃນສະຫວັນ ແລະຈົ່ງຕາມເຮົາມາເສຍ." 22ເມື່ອໄດ້ຍິນຄຳນັ້ນໜ້າຂອງ
ເພິ່ນກໍເສົ້າລົງ ຄົນນັ້ນກໍອອກໄປເປັນທຸກໜັກໃຈເພາະຕົນມີຊັບສິ່ງຂອງຈຳນວນຫລາຍ.

23ພຣະເຢຊູ ທອດພຣະເນດທົ່ວຮອບ ແລ້ວຊົງກ່າວແກ່ພວກສາວົກວ່າ, "ທີ່ຄົນຮັ່ງມີຈະເຂົ້າໃນ
ລາຊະແຜ່ນດິນຂອງ ພຣະເຈົ້າ ກໍຍາກແທ້ໜໍ." 24ພວກສາວົກກໍປະຫລາດໃຈໃນຖ້ອຍຄຳຂອງ
ພຣະອົງ ແຕ່ ພຣະເຢຊູ ຊົງກ່າວແກ່ເຂົາອີກວ່າ, "ລູກເອີຍ, ທີ່ຈະເຂົ້າໃນລາຊະແຜ່ນດິນຂອງ
ພຣະເຈົ້າ ກໍຍາກແທ້ໜໍ. 25ຕົວໂອດໂອຈະລອດຮູເຂັມກໍງ່າຍກວ່າຄົນຮັ່ງມີຈະເຂົ້າໄປໃນລາຊະ
ແຜ່ນດິນຂອງ ພຣະເຈົ້າ." 26ພວກສາວົກແຮ່ງປະຫລາດໃຈຫລາຍ ຈຶ່ງເວົ້າກັນວ່າ, "ຖ້າຢ່າງນັ້ນ
ໃຜຈະລອດພົ້ນໄດ້." 27ພຣະເຢຊູ ທອດພຣະເນດເຂົາແລ້ວຊົງກ່າວວ່າ, "ຝ່າຍມະນຸດກໍເຫລືອ
ກຳລັງທີ່ຈະເຮັດໄດ້ແຕ່ບໍ່ເຫລືອກຳລັງຂອງ ພຣະເຈົ້າ ເພາະຝ່າຍ ພຣະເຈົ້າ ຊົງເຮັດໄດ້ທຸກສິ່ງ."

28ຝ່າຍ ເປໂຕ ຈຶ່ງຕັ້ງຕົ້ນທູນພຣະອົງວ່າ, "ເບິ່ງແມ, ຂ້ານ້ອຍທັງຫລາຍໄດ້ສະຫລະໝົດທຸກສິ່ງ
ແລ້ວ ແລະໄດ້ຕາມທ່ານມາ." 29ພຣະເຢຊູ ຊົງຕອບວ່າ, "ເຮົາບອກທ່ານທັງຫລາຍຕາມຈິງວ່າ
ຖ້າຜູ້ໃດໄດ້ສະຫລະເຮືອນ, ຫລືອ້າຍເອື້ອຍນ້ອງ, ຫລືພໍ່ແມ່, ຫລືລູກ, ຫລືໄຮ່ນາ ເພາະເຫັນແກ່
ເຮົາແລະເຫັນແກ່ຂ່າວປະເສີດ. 30ໃນໂລກນີ້ຜູ້ນັ້ນຈະໄດ້ຮັບຕອບແທນຮ້ອຍທໍ່ ຄືເຮືອນ, ອ້າຍ
ເອື້ອຍນ້ອງ, ພໍ່ແມ່, ລູກ, ແລະໄຮ່ນາ ທັງຈະຖືກການຂົ່ມເຫງດ້ວຍ ແລະໃນໂລກໜ້າຈະໄດ້ຊີ-
ວິດອັນຕະຫລອດໄປເປັນນິດ. 31ແຕ່ມີຫລາຍຄົນທີ່ເປັນຜູ້ຕົ້ນຈະກັບເປັນປາຍ ແລະຜູ້ທີ່ເປັນປາຍ
ຈະກັບເປັນຕົ້ນ."

---

[ກ]ພາສາເດີມອາດຈະໝາຍຄວາມວ່າ "ເປັນກຳມະສິດຂອງ" ຫລືວ່າ "ເປັນທີ່ປະກອບດ້ວຍ"

## ພຣະເຢຊູຊົງກ່າວລ່ວງໜ້າເປັນຄັ້ງທີສາມວ່າຈະຖືກຂ້າ

*(ມທ 20:17-19; ລກ 18:30-34)*

32ເມື່ອກຳລັງເດີນທາງຂຶ້ນເມືອງກຸງເຢຣູຊາເລັມ ພຣະເຢຊູໄດ້ສະເດັດນຳໜ້າເຂົາ ຝ່າຍພວກ
ສາວົກກໍພາກັນຄຶດປະຫລາດໃຈ ແລະພວກທີ່ເດີນມາຕາມຫລັງກໍມີຄວາມຢ້ານ ພຣະອົງຈຶ່ງຊົງ
ເອີ້ນພວກສາວົກສິບສອງຄົນມາໃກ້ພຣະອົງອີກ ແລ້ວຊົງຕັ້ງຕົ້ນສະແດງເຫດການທີ່ຈຳເປັນຕ້ອງ
ເກີດຂຶ້ນແກ່ພຣະອົງໃຫ້ເຂົາຊາບ. 33ວ່າ, "ເບິ່ງແມ, ພວກເຮົາກຳລັງຂຶ້ນເມືອງກຸງເຢຣູຊາເລັມ
ເຂົາຈະມອບບຸດມະນຸດໄວ້ກັບພວກປະໂລຫິດຕົ້ນໃຫຍ່ແລະພວກນັກທຳ ພວກເຫລົ່ານີ້ຈະລົງ-
ໂທດປະຫານຊີວິດເພິ່ນ ແລະຈະມອບເພິ່ນໄວ້ກັບຄົນຕ່າງຊາດ. 34ຄົນຕ່າງຊາດນັ້ນຈະເຍາະ-
ເຍີ້ຍເພິ່ນ, ຈະຖົ່ມນ້ຳລາຍໃສ່ເພິ່ນ, ຈະຂ້ຽນຕີເພິ່ນ, ແລະຈະຂ້າເພິ່ນເສຍ ແລ້ວໃນວັນຖ້ວນສາມ
ເພິ່ນຈະຖືກຊົງບັນດານໃຫ້ເປັນຄືນມາໃໝ່."

## ຄຳທູນຂໍຂອງຢາໂກໂບແລະໂຢຮັນ

*(ມທ 20:20-28)*

35ຝ່າຍຢາໂກໂບກັບໂຢຮັນລູກຂອງເຊເບດາຍ ໄດ້ເຂົ້າມາທູນພຣະອົງວ່າ, "ອາຈານເອີຍ,
ຂ້ານ້ອຍທັງສອງປາດຖະໜາຈະຂໍໃຫ້ທ່ານໂຜດຕາມຄຳຂໍຂອງພວກຂ້ານ້ອຍ." 36ພຣະອົງຊົງ
ຖາມວ່າ, "ທ່ານທັງສອງປາດຖະໜາໃຫ້ເຮົາເຮັດສິ່ງໃດໃຫ້." 37ເຂົາຈຶ່ງທູນວ່າ, "ເມື່ອທ່ານຈະຢູ່
ໃນສະຫງ່າລາສີນັ້ນ ຂໍໂຜດໃຫ້ຂ້ານ້ອຍນັ່ງທີ່ເບື້ອງຂວາທ່ານຄົນໜຶ່ງແລະເບື້ອງຊ້າຍຄົນໜຶ່ງ."
38ພຣະເຢຊູຊົງຕອບເຂົາວ່າ, "ທີ່ພວກທ່ານຂໍນັ້ນທ່ານບໍ່ເຂົ້າໃຈ ຈອກທີ່ເຮົາດື່ມນັ້ນ ທ່ານຈະດື່ມ
ໄດ້ຫລື ແລະບັບຕິສະມາທີ່ເຮົາຮັບນັ້ນ ທ່ານຈະຮັບໄດ້ຫລື." 39ເຂົາທູນຕອບວ່າ, "ໄດ້ຢູ່ຂ້າ-
ນ້ອຍ" ພຣະເຢຊູຈຶ່ງຊົງກ່າວແກ່ເຂົາວ່າ, "ຈອກທີ່ເຮົາດື່ມທ່ານກໍຈະດື່ມແທ້ ແລະບັບຕິສະມາທີ່
ເຮົາຮັບທ່ານກໍຈະຮັບແທ້. 40ແຕ່ທີ່ຈະນັ່ງເບື້ອງຂວາຫລືເບື້ອງຊ້າຍຂອງເຮົານັ້ນ ບໍ່ແມ່ນໜ້າທີ່
ຂອງເຮົາຈະຈັດໃຫ້ ແຕ່ພຣະເຈົ້າໄດ້ຊົງຈັດໄວ້ສຳລັບຜູ້ໃດກໍເປັນຂອງຜູ້ນັ້ນ."
41ເມື່ອສາວົກສິບສອງຄົນໄດ້ຍິນແລ້ວ ກໍຕັ້ງຕົ້ນເຄືອງໃຈເພາະຢາໂກໂບແລະໂຢຮັນ.
42ພຣະເຢຊູຊົງເອີ້ນເຂົາມາ ຈຶ່ງຊົງກ່າວວ່າ, "ທ່ານທັງຫລາຍຮູ້ຢູ່ວ່າ ຜູ້ທີ່ນັບວ່າເປັນຜູ້ປົກຄອງ
ຄົນຕ່າງຊາດກໍບັງຄັບບັນຊາເຂົາ ແລະພວກຜູ້ໃຫຍ່ກໍໃຊ້ອຳນາດເໜືອເຂົາ. 43ແຕ່ໃນລະຫວ່າງ
ພວກທ່ານບໍ່ເປັນຢ່າງນັ້ນ ຖ້າຜູ້ໃດຢາກເປັນໃຫຍ່ໃນພວກທ່ານຜູ້ນັ້ນຈະຕ້ອງເປັນຜູ້ຮັບໃຊ້ທ່ານ
ທັງຫລາຍ. 44ແລະຖ້າຜູ້ໃດຢາກເປັນເອກເປັນຕົ້ນໃນພວກທ່ານ ຜູ້ນັ້ນຈະຕ້ອງເປັນຂ້ອຍໃຊ້ຂອງ
ທ່ານທັງໝົດ. 45ເພາະບຸດມະນຸດນັ້ນບໍ່ໄດ້ມາໃຫ້ຄົນອື່ນປະຕິບັດຕົນ ແຕ່ມາເພື່ອປະຕິບັດເຂົາ
ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນຫລາຍ."

## ພຣະເຢຊູຊົງໂຜດຄົນຕາບອດ

*(ມທ 20:28-34; ລກ 18:35-43)*

46ຝ່າຍພຣະເຢຊູກໍສະເດັດມາຍັງເມືອງເຢຣິໂກພ້ອມດ້ວຍພວກສາວົກ ເມື່ອພຣະອົງກຳລັງ
ສະເດັດອອກຈາກເມືອງເຢຣິໂກ ພ້ອມກັບພວກສາວົກແລະປະຊາຊົນຈຳນວນຫລາຍ ມີຄົນຕາ-
ບອດຜູ້ໜຶ່ງຊື່ບາຣະຕີມາຍຊຶ່ງເປັນລູກຂອງຕີມາຍ ນັ່ງຂໍທານຢູ່ແຄມທາງ. 47ເມື່ອຄົນນັ້ນໄດ້ຍິນ

ວ່າແມ່ນ ພຣະເຢຊູ ໄທ ນາຊາເຣັດ ສະເດັດມາ ກໍຕັ້ງຕົ້ນຮ້ອງຂຶ້ນວ່າ "ທ່ານ ເຢຊູ ບຸດ ດາວິດ ເອີຍ,
ຂໍຈົ່ງ ເມດຕາຂ້ານ້ອຍ ແດ່ທ້ອນ." [48]ມີຫລາຍຄົນໄດ້ຫ້າມໃຫ້ມິດຢູ່ ແຕ່ຜູ້ນັ້ນແຮ່ງຮ້ອງດັງຂຶ້ນວ່າ,
"ບຸດ ດາວິດ ເອີຍ, ຂໍຈົ່ງ ເມດຕາຂ້ານ້ອຍແດ່ທ້ອນ." [49]ພຣະເຢຊູ ໄດ້ຊົງຢຸດຢືນຢູ່ ແລ້ວຊົງສັ່ງວ່າ,
"ຈົ່ງ ເອີ້ນຄົນນັ້ນມາ" ເຂົາຈຶ່ງ ເອີ້ນຄົນຕາບອດນັ້ນວ່າ, "ຈົ່ງຊື່ນໃຈແລະລຸກຂຶ້ນ ເທາະ ເພິ່ນກຳລັງ
ເອີ້ນ ເຈົ້າ." [50]ຄົນຕາບອດນັ້ນກໍຖິ້ມຜ້າຫົ່ມເສຍ ແລ້ວຮີບລູກຂຶ້ນມາຫາ ພຣະເຢຊູ. [51]ພຣະເຢຊູ
ຊົງຖາມຜູ້ນັ້ນວ່າ, "ເຈົ້າຢາກໃຫ້ເຮົາເຮັດຫຍັງໃຫ້ເຈົ້າ" ຄົນຕາບອດໄດ້ທູນພຣະອົງວ່າ, "ພຣະ-
ອາຈານເອີຍ, ຂໍໂຜດໃຫ້ຂ້ານ້ອຍເຫັນຮຸ່ງແດ່ທ້ອນ." [52]ພຣະເຢຊູ ຊົງບອກຜູ້ນັ້ນວ່າ, "ຈົ່ງໄປເສຍ
ຄວາມເຊື່ອຂອງ ເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ" ໃນທັນໃດນັ້ນຄົນຕາບອດກໍເຫັນຮຸ່ງ ແລະໄດ້ເດີນ-
ທາງຕາມພຣະອົງໄປ.

# ບົດທີ 11

## ການສະເດັດເຂົ້າກຸງຢ່າງມີໄຊ

*(ມທ 21:1-11; ລກ 19:28-40; ຢຮ 12:12-19)*

[1]ເມື່ອພຣະອົງສະເດັດພ້ອມດ້ວຍພວກສາວົກມາ ໃກ້ກຸງ ເຢຣູຊາເລັມ ເຖິງບ້ານ ເບັດຟາເຄ
ແລະບ້ານ ເບັດທານີ ທີ່ພູໝາກກອກເທດ ພຣະອົງໄດ້ຊົງໃຊ້ສາວົກສອງຄົນໄປ, [2]ໂດຍຊົງສັ່ງ
ເຂົາວ່າ, "ຈົ່ງເຂົ້າໄປໃນບ້ານທີ່ຢູ່ຕໍ່ໜ້າພວກທ່ານນັ້ນ ຄັນເຂົ້າໄປແລ້ວ ໃນທັນໃດນັ້ນຈະພົບລໍ
ນ້ອຍ ໂຕໜຶ່ງຜູກຢູ່ ທີ່ຍັງບໍ່ມີໃຜຂີ່ນຂີ່ຈັກເທື່ອ ຈົ່ງແກ້ມັນຈູງມາທີ່ນີ້. [3]ຖ້າມີໃຜຖາມວ່າ 'ເປັນ
ຫຍັງຈຶ່ງເຮັດດັ່ງນັ້ນ' ຈົ່ງຕອບວ່າ 'ນາຍຕ້ອງການ[ກ] ແລະບໍ່ດຽວຈະສົ່ງມັນກັບຄືນມາໃຫ້ທີ່ນີ້'."
[4]ແລ້ວສາວົກສອງຄົນນັ້ນກໍໄປ ແລະໄດ້ພົບລໍນ້ອຍໂຕໜຶ່ງຜູກຢູ່ນອກປະຕູໃນຖະໜົນ ເຂົາຈຶ່ງ
ແກ້ມັນ. [5]ຜູ້ລາງຄົນທີ່ຢືນຢູ່ທີ່ນັ້ນໄດ້ຖາມເຂົາວ່າ, "ພວກທ່ານແກ້ລໍນ້ອຍເຮັດຫຍັງ." [6]ສາວົກສອງ
ຄົນນັ້ນກໍຕອບຕາມທີ່ ພຣະເຢຊູຊົງສັ່ງເຂົາ ແລ້ວຄົນເຫລົ່ານັ້ນກໍຍອມໃຫ້ເຂົາໄປ. [7]ສາວົກຈຶ່ງຈູງ
ລໍນັ້ນມາໃຫ້ ພຣະເຢຊູ ເຂົາໄດ້ເອົາເສື້ອຜ້າຂອງຕົນປູຫລັງມັນ ແລ້ວພຣະອົງໄດ້ຊົງຂຶ້ນປະທັບ.
[8]ມີຫລາຍຄົນໄດ້ເອົາເສື້ອຜ້າຂອງຕົນປູລົງຕາມທາງ ແລະມີລາງຄົນໄດ້ຕັດຟົດໄມ້ມາປູ. [9]ຝ່າຍ
ຄົນທີ່ຍ່າງໄປກ່ອນກັບຜູ້ທີ່ມາຕາມຫລັງໄດ້ໂຫ່ຮ້ອງວ່າ, "ໂຮຊັນນາ ຂໍໃຫ້ທ່ານຜູ້ສະເດັດມາໃນ
ພຣະນາມຂອງອົງ ພຣະຜູ້ເປັນເຈົ້າ ຈົ່ງຊົງພຣະຈະເລີນ. [10]ຄວາມສຸກສະຫວັດດີຈົ່ງມີແກ່ລາຊະ
ອານາຈັກຂອງ ດາວິດ ບັນພະບຸລຸດຂອງພວກເຮົາທີ່ຈະມາ ໂຮຊັນນາ ໃນທີ່ສູງສຸດ." [11]ພຣະເຢຊູ
ໄດ້ສະເດັດເຂົ້າກຸງ ເຢຣູຊາເລັມ ແລະເຂົ້າໄປໃນບໍລິເວນພຣະວິຫານ ເມື່ອຊົງທອດພຣະເນດສິ່ງ
ທັງປວງທົ່ວແລ້ວ ເວລາກໍໃກ້ຄໍ່າ ພຣະອົງຈຶ່ງສະເດັດອອກໄປຍັງບ້ານ ເບັດທານີ ກັບພວກສາວົກ
ສິບສອງຄົນນັ້ນ.

## ຊົງປ້ອຍຕົ້ນເດື່ອເທດ

*(ມທ 21:18-19)*

[12]ໃນວັນຕໍ່ໄປ ເມື່ອພຣະອົງສະເດັດຈາກບ້ານ ເບັດທານີ ພ້ອມກັບພວກສາວົກກໍຊົງຫິວອາ-

[ກ]ຫລືວ່າ "ເຈົ້າຂອງມັນຕ້ອງການ."

ທານ. [13]ພໍທອດພຣະເນດເຫັນຕົ້ນເດື່ອເທດຕົ້ນໜຶ່ງມີໃບຢູ່ແຕ່ໄກ ພຣະອົງກໍສະເດັດເຂົ້າໄປເບິ່ງ
ວ່າຈະມີໝາກຫລືບໍ່ ຄັນມາເຖິງແລ້ວ ບໍ່ເຫັນມີໝາກມີແຕ່ໃບ ເພາະວ່າຍັງບໍ່ເຖິງລະດູໝາກ.
[14]ພຣະອົງຈຶ່ງຊົງເວົ້າໃສ່ຕົ້ນໄມ້ນັ້ນວ່າ, "ຕັ້ງແຕ່ນີ້ຕໍ່ໄປຢ່າໃຫ້ມີຜູ້ໃດໄດ້ກິນໝາກຈາກມຶງຈັກເທື່ອ"
ພວກສາວົກກໍໄດ້ຍິນຄຳຊຶ່ງພຣະອົງຊົງກ່າວນັ້ນ.

## ຊົງຊຳລະພຣະວິຫານ

*(ມທ 21:12-17; ລກ 19:45-48; ຢຮ 2:13-22)*

[15]ເມື່ອມາເຖິງກຸງເຢຣູຊາເລັມແລ້ວ ພຣະອົງໄດ້ສະເດັດໄປໃນບໍລິເວນພຣະວິຫານຊົງຕັ້ງຕົ້ນ
ຂັບໄລ່ບັນດາຜູ້ຊື້ຂາຍໃນບໍລິເວນພຣະວິຫານນັ້ນ ພຣະອົງຊົງຂວ້ຳໂຕະຂອງຜູ້ແລກເງິນກັບບ່ອນ
ນັ່ງຂອງຜູ້ຂາຍນົກເຂົາເສຍ. [16]ແລະຊົງຫ້າມບໍ່ໃຫ້ຜູ້ໃດຂົນສິ່ງໃດຜ່ານບໍລິເວນພຣະວິຫານ.
[17]ພຣະອົງຊົງບອກສອນເຂົາວ່າ, "ມີຄຳຂຽນໄວ້ໃນພຣະທຳພີບໍ່ແມ່ນຫລືວ່າ 'ວິຫານຂອງເຮົາຈະ
ເອີ້ນວ່າ ເປັນສະຖານທີ່ໄຫວ້ວອນຂອງຄົນທຸກຊາດ' ແຕ່ຝ່າຍພວກເຈົ້າໄດ້ເຮັດໃຫ້ເປັນ 'ຖ້ຳ
ຂອງໂຈນ'." [18]ເມື່ອພວກປະໂລຫິດຕົນໃຫຍ່ແລະພວກນັກທຳໄດ້ຍິນດັ່ງນັ້ນ ກໍພາກັນພະຍາຍາມ
ຈະຂ້າພຣະອົງເສຍ ເພາະເຂົາຢ້ານພຣະອົງ ເຫດວ່າປະຊາຊົນທັງໝົດປະຫລາດໃຈດ້ວຍຄຳ
ສັ່ງສອນຂອງພຣະອົງ. [19]ເມື່ອໃກ້ຈະເຖິງຍາມຄ່ຳພຣະອົງກໍສະເດັດອອກຈາກກຸງ.

## ຄຳສອນຈາກຕົ້ນເດື່ອເທດທີ່ຫ່ຽວແຫ້ງໄປ

*(ມທ 21:20-22)*

[20]ໃນເວລາເຊົ້າ ເມື່ອພຣະອົງສະເດັດຜ່ານທີ່ນັ້ນໄປພ້ອມກັບພວກສາວົກ ເຂົາໄດ້ເຫັນຕົ້ນເດື່ອ
ເທດນັ້ນຫ່ຽວແຫ້ງໄປຈົນເຖິງຮາກ. [21]ຝ່າຍເປໂຕກໍໄດ້ຈື່ຈຳເຫດການຈຶ່ງທູນພຣະອົງວ່າ, "ພຣະ-
ອາຈານເອີຍ ເບິ່ງແມ, ຕົ້ນເດື່ອເທດທີ່ເພິ່ນໄດ້ປ້ອຍນັ້ນກໍຫ່ຽວແຫ້ງໄປແລ້ວ." [22]ພຣະເຢຊູຊົງ
ກ່າວແກ່ເຂົາວ່າ, "ຕ້ອງມີຄວາມເຊື່ອໃນພຣະເຈົ້າ. [23]ເຮົາບອກພວກທ່ານຕາມຈິງວ່າ ຖ້າຜູ້ໃດ
ຈະສັ່ງພູນີ້ວ່າ 'ຈົ່ງຍ້າຍໄປຕົກລົງນ້ຳທະເລເສຍ' ແລະບໍ່ໄດ້ສົງໄສໃນໃຈ ແຕ່ເຊື່ອວ່າຈະເປັນໄປ
ຕາມຄຳສັ່ງນັ້ນແລ້ວກໍຈະເປັນໄປຕາມນັ້ນ. [24]ເຫດສັນນັ້ນເຮົາບອກທ່ານທັງຫລາຍວ່າ ສິ່ງໃດທີ່
ພວກທ່ານອ້ອນວອນທູນຂໍນັ້ນ ຈົ່ງເຊື່ອວ່າໄດ້ຮັບແລ້ວແລະກໍຄົງຈະເປັນແກ່ທ່ານ. [25]ເມື່ອທ່ານ
ຢືນອ້ອນວອນຢູ່ ຖ້າມີເຫດກັບຜູ້ໜຶ່ງຜູ້ໃດ ຈົ່ງນິກອະໄພໂທດໃຫ້ຜູ້ນັ້ນເສຍ ເພື່ອພຣະບິດາຂອງ
ທ່ານຜູ້ຊົງສະຖິດຢູ່ໃນສະຫວັນ ຈະຊົງຍົກຄວາມຜິດຂອງທ່ານດ້ວຍ. [26][ແຕ່ຖ້າທ່ານບໍ່ຍົກໂທດ
ນັ້ນ ພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສະຫວັນກໍຈະບໍ່ຍົກຄວາມຜິດຂອງທ່ານເໝືອນກັນ.]"

## ບັນຫາເລື່ອງສິດອຳນາດຂອງພຣະເຢຊູ

*(ມທ 21:23-27; ລກ 20:1-8)*

[27]ພຣະອົງໄດ້ສະເດັດກັບເຂົ້າກຸງເຢຣູຊາເລັມອີກພ້ອມດ້ວຍພວກສາວົກ ເມື່ອພຣະອົງກຳລັງ
ສະເດັດໄປມາໃນບໍລິເວນພຣະວິຫານ ມີພວກປະໂລຫິດຕົນໃຫຍ່, ພວກນັກທຳ, ແລະພວກເຖົ້າ
ແກ່ເຂົ້າມາຫາພຣະອົງ, [28]ທູນຖາມວ່າ, "ເຈົ້າມີສິດອັນໃດເຮັດການເຫລົ່ານີ້ ໃຜໃຫ້ສິດນີ້ແກ່
ເຈົ້າ." [29]ພຣະເຢຊູຈຶ່ງຊົງຕອບເຂົາວ່າ, "ເຮົາຈະຖາມພວກທ່ານຈັກຂໍ້ໜຶ່ງ ຈົ່ງຕອບເຮົາ ແລ້ວ
ເຮົາຈະບອກພວກທ່ານວ່າ ເຮົາເຮັດການນີ້ດ້ວຍສິດອັນໃດ. [30]ຄືບັບຕິສະມາຂອງໂຢຮັນນັ້ນມາ

ຈາກສະຫວັນຫລືມາຈາກມະນຸດ.” [31]ເຂົາຈຶ່ງປຶກສາກັນວ່າ, “ຖ້າເຮົາຈະວ່າ ‘ມາຈາກສະຫວັນ’
ມັນຄົງຈະຖາມເຮົາວ່າ ‘ດ້ວຍເຫດໃດຈຶ່ງບໍ່ເຊື່ອໂຢຮັນນັ້ນ’. [32]ແຕ່ຖ້າເຮົາຈະວ່າ ‘ມາຈາກມະ-
ນຸດ’...” ເຂົາກໍຢ້ານປະຊາຊົນ ເພາະຄົນທັງປວງຖືວ່າໂຢຮັນເປັນຜູ້ປະກາດພຣະທຳແທ້ໆ.
[33]ເຂົາຈຶ່ງທູນຕອບພຣະເຢຊູວ່າ, “ພວກເຮົາບໍ່ຮູ້” ແລ້ວພຣະເຢຊູຊົງກ່າວແກ່ເຂົາວ່າ, “ຝ່າຍເຮົາ
ຈະບໍ່ບອກທ່ານທັງຫລາຍເໝືອນກັນວ່າ ເຮົາເຮັດການເຫລົ່ານີ້ດ້ວຍສິດອັນໃດ.”

# ບົດທີ 12

## ຄຳອຸປະມາເລື່ອງສວນອະງຸ່ນແລະຄົນເຊົ່າ

*(ມທ 21:33-46; ລກ 20:9-19)*

[1]ພຣະອົງຈຶ່ງຕັ້ງຕົ້ນຊົງກ່າວແກ່ເຂົາເປັນຄຳອຸປະມາວ່າ, “ມີຊາຍຄົນໜຶ່ງໄດ້ເຮັດສວນອະງຸ່ນ
ແລ້ວລ້ອມຮົ້ວໄວ້, ໄດ້ສະກັດອ່າງຢຽບເອົານ້ຳອະງຸ່ນ, ແລະສ້າງຫໍເຝົ້າໃຫ້ຊາວສວນເຊົ່າ ແລ້ວ
ຕົນກໍອອກໄປຕ່າງປະເທດ. [2]ຄັນເຖິງລະດູໝາກອະງຸ່ນເພິ່ນຈຶ່ງໃຫ້ຂ້ອຍໃຊ້ຄົນໜຶ່ງມາຫາພວກ
ເຊົ່າສວນນັ້ນ ເພື່ອຈະໄດ້ຮັບຜົນຈາກສວນຂອງຕົນ. [3]ແຕ່ຝ່າຍຄົນເຫລົ່ານັ້ນໄດ້ຈັບຂ້ອຍໃຊ້ຄົນ
ນັ້ນຂ້ຽນຕີ ແລ້ວໄລ່ໃຫ້ກັບໄປມືເປົ່າໆ. [4]ອີກເທື່ອໜຶ່ງເຈົ້າຂອງສວນໄດ້ໃຫ້ຂ້ອຍອີກຄົນໜຶ່ງມາ
ຫາຄົນເຊົ່າສວນ ຄົນເຊົ່າສວນນັ້ນກໍທຸບຕີຂ້ອຍໃຊ້ນັ້ນຈົນຫົວແຕກ ແລະຍັງເຮັດໃຫ້ມັນໄດ້ຖືກ
ອັບອາຍຂາຍໜ້າອີກ. [5]ແລ້ວເຈົ້າຂອງສວນຍັງໄດ້ໃຫ້ຂ້ອຍມາອີກຄົນໜຶ່ງ ເຂົາກໍຂ້າຂ້ອຍໃຊ້ນັ້ນ
ເສຍ ແລ້ວເພິ່ນຍັງໃຫ້ຂ້ອຍມາອີກຫລາຍຄົນ ບາງຄົນເຂົາກໍຂ້ຽນຕີ, ບາງຄົນເຂົາກໍຂ້າເສຍ.
[6]ເຈົ້າຂອງສວນຍັງມີອີກຜູ້ໜຶ່ງ ຄືລູກຊາຍທີ່ຕົນຮັກ ເພິ່ນຈຶ່ງໃຫ້ລູກຄົນນັ້ນມາເປັນເທື່ອສຸດທ້າຍ
ໂດຍເພິ່ນນຶກວ່າ ‘ເຂົາຄົງຈະນັບຖືລູກຂອງກູ’. [7]ແຕ່ຄົນເຊົ່າສວນເວົ້າກັນວ່າ ‘ຄົນນີ້ແຫລະ,
ເປັນເຈົ້າມໍລະດົກ ພວກເຮົາຈົ່ງຂ້າມັນເສຍ ແລ້ວມໍລະດົກນັ້ນຈະຕົກເປັນຂອງເຮົາ’. [8]ເຂົາຈຶ່ງ
ພາກັນຈັບລູກນັ້ນຂ້າເສຍ ແລ້ວເອົາສົບຖິ້ມນອກສວນ. [9]ເຈົ້າຂອງສວນຈະເຮັດແນວໃດ ທ່ານກໍ
ຈະມາຂ້າຄົນເຊົ່າສວນເຫລົ່ານັ້ນເສຍ ແລ້ວຈະເອົາສວນອະງຸ່ນນັ້ນໃຫ້ຄົນອື່ນເຊົ່າ. [10]ພວກທ່ານ
ບໍ່ໄດ້ອ່ານພຣະຄຳຕອນນີ້ຫລືທີ່ວ່າ,

‘ຫີນທີ່ນາຍຊ່າງໄດ້ຖອດຖິ້ມເສຍ
ຫີນນັ້ນແຫລະ, ໄດ້ກາຍເປັນຫີນ ເສົາເອກແລ້ວ.
[11] ການນີ້ເປັນມາຈາກອົງພຣະຜູ້ເປັນເຈົ້າ
ເປັນການອັນອັດສະຈັນໃຈຕໍ່ຕາຂອງເຮົາ’.”

[12]ຝ່າຍເຂົາຈຶ່ງພະຍາຍາມຈະຈັບພຣະອົງ ແຕ່ວ່າເຂົາຢ້ານປະຊາຊົນ ດ້ວຍເຂົາຮູ້ຢູ່ວ່າພຣະອົງ
ໄດ້ຊົງກ່າວຄຳອຸປະມານີ້ຕໍ່ສູ້ເຂົາເອງ ແລ້ວເຂົາກໍພາກັນໜີຈາກພຣະອົງເສຍ.

## ການເສຍສ່ວຍໃຫ້ແກ່ກາຍຊາ

*(ມທ 22:15-22; ລກ 20:20-26)*

[13]ເຂົາຈຶ່ງໃຊ້ບາງຄົນໃນພວກຟາຣີຊາຍແລະພວກເຮໂຣດໄປຫາພຣະອົງ ເພື່ອຄອຍຈັບ
ຄວາມຜິດໃນຖ້ອຍຄຳຂອງພຣະອົງ. [14]ເມື່ອເຂົາມາເຖິງແລ້ວກໍທູນຖາມພຣະອົງວ່າ, “ອາຈານ

ເອີຍ, ພວກຂ້າພະເຈົ້າຊາບຢູ່ວ່າ ທ່ານເປັນຜູ້ສັດຊື່ແລະບໍ່ໄດ້ເອົາໃຈຜູ້ໃດ ເພາະທ່ານບໍ່ເຫັນແກ່-
ໜ້າຜູ້ໃດ ແຕ່ສັ່ງສອນໃນທາງຂອງ ພຣະເຈົ້າ ຢ່າງສັດຊື່ ການທີ່ເສຍສ່ວຍໃຫ້ ກາຍຊາ ນັ້ນສົມ-
ຄວນ[ກ] ຫລືບໍ່ ພວກຂ້າພະເຈົ້າຄວນເສຍຫລືບໍ່ເສຍ.” 15ຝ່າຍພຣະອົງຊົງຊາບກົນອຸບາຍຂອງ
ເຂົາຈຶ່ງຊົງກ່າວວ່າ, “ພວກເຈົ້າມາທົດລອງເຮົາເຮັດຫຍັງ ຈົ່ງເອົາເງິນເດນາຣິອົນຫລຽນໜຶ່ງມາ
ໃຫ້ເຮົາເບິ່ງດູ.” 16ເຂົາກໍເອົາມາໃຫ້ ພຣະອົງຈຶ່ງຊົງຖາມເຂົາວ່າ, “ຮູບແລະຄຳຈາລຶກນີ້ແມ່ນ
ຂອງໃຜ?” ເຂົາທູນຕອບວ່າ, “ເປັນຂອງ ກາຍຊາ”. 17ພຣະເຢຊູ ຈຶ່ງຊົງກ່າວແກ່ເຂົາວ່າ, “ສິ່ງທີ່
ເປັນຂອງ ກາຍຊາ ຈົ່ງຄືນຖວາຍແກ່ ກາຍຊາ ແລະສິ່ງທີ່ເປັນຂອງ ພຣະເຈົ້າ ຈົ່ງຄືນຖວາຍແດ່
ພຣະເຈົ້າ” ຝ່າຍເຂົາກໍງຶດປະຫລາດໃຈໃນພຣະອົງເຕັມທີ.

## ບັນຫາເລື່ອງການຄືນມາຈາກຕາຍ

*(ມທ 22:23-33; ລກ 20:27-40)*

18ວັນໜຶ່ງມີພວກ ຊາດູກາຍ ມາຫາພຣະອົງ ພວກນີ້ເຄີຍເວົ້າວ່າການຄືນມາຈາກຕາຍນັ້ນບໍ່ມີ
ເຂົາທູນຖາມພຣະອົງວ່າ, 19“ອາຈານເອີຍ, ໂມເຊ ໄດ້ຂຽນສັ່ງພວກເຮົາໄວ້ວ່າ ‘ຖ້າອ້າຍຂອງຄົນ
ໃດຕາຍແລະພັນລະຍາຍັງຢູ່ແຕ່ບໍ່ມີລູກ ກໍໃຫ້ນ້ອງຊາຍຮັບເອື້ອຍໃພ້ເປັນພັນລະຍາໄວ້ ເພື່ອສືບ
ເຊື້ອສາຍອ້າຍຂອງຕົນ’. 20ຍັງມີເຈັດຊາຍອ້າຍນ້ອງນຳກັນ ອ້າຍກົກເອົາເມຍແລ້ວໄດ້ຕາຍໄປ
ເມື່ອຍັງບໍ່ມີລູກ. 21ນ້ອງຜູ້ຖ້ວນໜຶ່ງກໍຮັບເອົາຍິງນັ້ນເປັນເມຍກໍຕາຍຍັງບໍ່ມີລູກ ແລະນ້ອງຜູ້ຖ້ວນ
ສອງກໍຮັບເອົາເໝືອນກັນ ແຕ່ກໍຕາຍບໍ່ມີລູກ. 22ອ້າຍນ້ອງທັງເຈັດຄົນນີ້ກໍໄດ້ເອົາຍິງນັ້ນເປັນເມຍ
ແລະບໍ່ມີລູກ ທີ່ສຸດຜູ້ຍິງນັ້ນກໍຕາຍເໝືອນກັນ. 23ສັນນັ້ນໃນວັນຄືນມາຈາກຕາຍ [ເມື່ອຄົນທັງ
ປວງຈະຖືກຊົງບັນດານໃຫ້ເປັນຄືນມາ] ຍິງນັ້ນຈະເປັນເມຍຂອງຜູ້ໃດ ດ້ວຍວ່ານາງໄດ້ເປັນເມຍ
ຂອງຊາຍທັງເຈັດຄົນແລ້ວ.” 24ພຣະເຢຊູ ຊົງຕອບເຂົາວ່າ, “ເພາະຂໍ້ນີ້ແຫລະ, ພວກທ່ານຫລົງ
ຜິດແລ້ວບໍ່ແມ່ນຫລື ຄືພວກທ່ານບໍ່ຮູ້ຈັກພຣະຄຳພີແລະລິດເດດຂອງ ພຣະເຈົ້າ. 25ເພາະເມື່ອມະ-
ນຸດຖືກຊົງບັນດານໃຫ້ເປັນຄືນມາຈາກຕາຍນັ້ນ ຈະບໍ່ມີການແຕ່ງງານຫລືຍົກໃຫ້ເປັນຜົວເມຍກັນ
ອີກ ແຕ່ເຂົາຈະເປັນເໝືອນເທວະດາໃນສະຫວັນ. 26ແຕ່ເລື່ອງຄົນທີ່ຕາຍແລ້ວ ທີ່ເຂົາຈະຖືກຊົງ
ບັນດານໃຫ້ເປັນຄືນມາອີກນັ້ນ ພວກທ່ານບໍ່ໄດ້ອ່ານໃນພຣະຄຳພີຂອງ ໂມເຊ ຈັກເທື່ອຫລື ຕອນ
ເລື່ອງພຸ່ມໄມ້ນັ້ນຊຶ່ງ ພຣະເຈົ້າ ຊົງກ່າວແກ່ ໂມເຊ ວ່າ ‘ຝ່າຍເຮົາເປັນ ພຣະເຈົ້າ ຂອງ ອັບຣາຮາມ,
ພຣະເຈົ້າ ຂອງ ອີຊາກ, ແລະ ພຣະເຈົ້າ ຂອງ ຢາໂຄບ’. 27ພຣະອົງບໍ່ໄດ້ຊົງເປັນ ພຣະເຈົ້າ ຂອງ
ຄົນຕາຍ ແຕ່ຊົງເປັນ ພຣະເຈົ້າ ຂອງຄົນເປັນ ພວກທ່ານຫລົງຜິດໄປຫລາຍ.”

## ພຣະບັນຍັດຂໍ້ໃຫຍ່

*(ມທ 22:34-40; ລກ 10:25-28)*

28ມີນັກທຳຄົນໜຶ່ງ ເມື່ອເຂົ້າມາເຖິງໄດ້ຍິນເຂົາໄຕ່ຖາມກັນຢູ່ ແລະທັງເຫັນວ່າພຣະອົງຊົງຕອບ
ເຂົາໄດ້ດີ ຈຶ່ງທູນຖາມພຣະອົງວ່າ, “ພຣະບັນຍັດຂໍ້ໃດເປັນເອກເປັນໃຫຍ່ກວ່າຂໍ້ບັນຍັດທັງປວງ.”
29ພຣະເຢຊູ ຊົງຕອບວ່າ, “ພຣະບັນຍັດຂໍ້ເອກນັ້ນຄືດັ່ງນີ້ ‘ຊາວ ອິສຣາເອນ ເອີຍ, ຈົ່ງຟັງເທີນ
ອົງ ພຣະຜູ້ເປັນເຈົ້າ ຂອງ ເຮົາທັງຫລາຍຊົງ ເປັນ ພຣະເຈົ້າ ອົງດຽວ. 30ແລະພວກເຈົ້າຈົ່ງຮັກອົງ

[ກ]ໝາຍຄວາມວ່າຖືກຕ້ອງພຣະບັນຍັດ.

ພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ, ດ້ວຍສຸດຈິດ, ດ້ວຍສຸດຄວາມຄຶດ, ແລະດ້ວຍສຸດກຳລັງ
ຂອງເຈົ້າ'. 31ພຣະບັນຍັດຂໍ້ທີສອງນັ້ນຄື 'ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ' ພຣະບັນຍັດຂໍ້
ອື່ນທີ່ໃຫຍ່ກວ່າພຣະບັນຍັດສອງຂໍ້ນີ້ບໍ່ມີ." 32ຝ່າຍນັກທຳຄົນນັ້ນທູນວ່າ, "ດີແລ້ວ, ອາຈານເອີຍ
ທ່ານກ່າວຖືກແລ້ວວ່າພຣະອົງນັ້ນແມ່ນ ພຣະເຈົ້າອົງດຽວ ແລະນອກຈາກພຣະອົງນັ້ນບໍ່ມີພຣະ-
ເຈົ້າອົງອື່ນ. 33ແລະທີ່ຈະຮັກພຣະອົງດ້ວຍສຸດໃຈ, ດ້ວຍສຸດຄວາມເຂົ້າໃຈ, ແລະດ້ວຍສຸດກຳລັງ
ທັງຈະຮັກເພື່ອນບ້ານເໝືອນຮັກຕົນເອງນັ້ນກໍປະເສີດກວ່າເຄື່ອງເຜົາບູຊາ ແລະຂອງຖວາຍທັງ
ປວງ." 34ເມື່ອ ພຣະເຢຊູ ຊົງເຫັນຜູ້ນັ້ນຕອບດ້ວຍຄວາມສະຫລາດ ຈຶ່ງຊົງກ່າວແກ່ເພິ່ນວ່າ,
"ທ່ານບໍ່ໄກຈາກແຜ່ນດິນຂອງ ພຣະເຈົ້າ" ຕັ້ງແຕ່ນັ້ນບໍ່ມີຜູ້ໃດກ້າຖາມພຣະອົງຕໍ່ໄປອີກ.

## ບັນຫາເລື່ອງເຊື້ອສາຍຂອງດາວິດ

*(ມທ 22:41-46; ລກ 20:41-44)*

35ເມື່ອ ພຣະເຢຊູ ຊົງສັ່ງສອນຢູ່ໃນບໍລິເວນພຣະວິຫານໄດ້ຊົງຖາມວ່າ, "ທີ່ພວກນັກທຳເວົ້າວ່າ
ພຣະຄຣິດ ຊົງເປັນເຊື້ອສາຍຂອງ ດາວິດນັ້ນ ເປັນໄດ້ຢ່າງໃດ. 36ດ້ວຍວ່າ ດາວິດ ເອງກ່າວໂດຍ
ເດດ ພຣະວິນຍານບໍລິສຸດວ່າ,

'ພຣະຜູ້ເປັນເຈົ້າ ໄດ້ຊົງກ່າວແກ່ອົງ ພຣະຜູ້ເປັນເຈົ້າຂອງຂ້າພຣະອົງວ່າ,
"ຈົ່ງນັ່ງເບື້ອງຂວາມືຂອງເຮົາ
ຈົນກວ່າເຮົາຈະປາບສັດຕູຂອງທ່ານໃຫ້ຢູ່ໃຕ້ຕີນຂອງທ່ານ".'

37ເມື່ອກະສັດ ດາວິດ ເອງຍັງ ເອີ້ນ ພຣະຄຣິດ ວ່າ 'ພຣະຜູ້ເປັນເຈົ້າ' ແລ້ວ ພຣະຄຣິດ ຈະ ເປັນ
ເຊື້ອສາຍຂອງ ດາວິດ ໄດ້ຢ່າງໃດ."

## ພຣະເຢຊູຊົງປະນາມພວກນັກທຳ

*(ມທ 23:1:36; ລກ 20:45-47)*

38ຝ່າຍປະຊາຊົນຫລວງຫລາຍໄດ້ຟັງພຣະອົງດ້ວຍຄວາມຍິນດີ, ເມື່ອພຣະອົງກຳລັງຊົງສັ່ງ-
ສອນຈຶ່ງກ່າວວ່າ, "ຈົ່ງລະວັງໃຫ້ດີຈາກພວກນັກທຳ ຜູ້ຊອບນຸ່ງເສື້ອຍາວຍ່າງໄປມາແລະຊອບ
ໃຫ້ຄົນຄຳນັບໃນທີ່ປະຊຸມຊົນ, 39ທັງຊອບບ່ອນນັ່ງອັນມີກຽດໃນໂຮງທຳມະເທດສະໜາແລະໃນ
ງານກິນລ້ຽງ. 40ເຂົາມັກກືນກິນຄອບຄົວແມ່ໝ້າຍແລະແກ້ງໄຫວ້ວອນໃຫ້ຍືດຍາວ ຄົນເຫລົ່ານີ້
ຈະຕ້ອງມີໂທດຫລາຍຂຶ້ນ."

## ເງິນຖວາຍຂອງຍິງໝ້າຍ

*(ມທ 21:1-4)*

41ພຣະເຢຊູປະທັບຢູ່ຕໍ່ໜ້າຕູ້ເກັບເງິນຖວາຍ ຈຶ່ງຊົງສັງເກດປະຊາຊົນທີ່ປ່ອນເງິນລົງໃນຕູ້ນັ້ນ
ແລະຄົນຮັ່ງມີຫລາຍຄົນໄດ້ເອົາເງິນຈຳນວນຫລາຍມາປ່ອນລົງ. 42ມີແມ່ໝ້າຍຄົນໜຶ່ງເປັນຄົນ
ຍາກຈົນ ໄດ້ເອົາຫລຽນທອງແດງສອງຫລຽນ ທີ່ມີຄ່ານ້ອຍທີ່ສຸດ ມາປ່ອນລົງເໝືອນກັນ.
43ພຣະອົງຈຶ່ງຊົງເອີ້ນພວກສາວົກມາ ແລ້ວຊົງກ່າວແກ່ເຂົາວ່າ, "ເຮົາບອກທ່ານທັງຫລາຍຕາມ
ຈິງວ່າ ແມ່ໝ້າຍຍາກຈົນຜູ້ນີ້ໄດ້ໃສ່ເງິນໃນຕູ້ຫລາຍກວ່າຄົນອື່ນທັງໝົດທີ່ປ່ອນໃສ່ນັ້ນ. 44ເພາະ-
ວ່າຄົນທັງປວງນັ້ນໄດ້ເອົາຈາກເງິນເຫລືອໃຊ້ຂອງເຂົາມາປ່ອນລົງ ແຕ່ຍິງຄົນນີ້ຂັດສົນທີ່ສຸດ ຍັງ

ໄດ້ເອົາເງິນທີ່ມີຢູ່ສຳລັບລ້ຽງຊີວິດຂອງຕົນມາໃສ່ຈົນໝົດ."

# ບົດທີ 13

## ພຣະເຢຊູຊົງກ່າວລ່ວງໜ້າໄວ້ເຖິງການທຳລາຍພຣະວິຫານ

*(ມທ 24:1-2; ລກ 21:5-6)*

1ເມື່ອພຣະເຢຊູກຳລັງສະເດັດອອກຈາກບໍລິເວນພຣະວິຫານ ມີສາວົກຂອງພຣະອົງຜູ້ໜຶ່ງທູນ
ວ່າ, "ເບິ່ງດູ, ອາຈານເອີຍ ກ້ອນຫີນແລະຕຶກເຫລົ່ານີ້ເກີນວ່າງົດງາມ." 2ພຣະເຢຊູຊົງກ່າວແກ່
ສາວົກຜູ້ນັ້ນວ່າ, "ທ່ານເຫັນຕຶກໃຫຍ່ເຫລົ່ານີ້ຫລື ກ້ອນຫີນທີ່ຊ້ອນທັບກັນຢູ່ນີ້ຈະຖືກທຳລາຍລົງ
ຈົນບໍ່ເຫລືອຈັກກ້ອນດຽວ."

## ຂັ້ນຕົ້ນຂອງຄວາມທຸກລຳບາກ

*(ມທ 24:3-14; ລກ 21:8-19)*

3ເມື່ອພຣະອົງປະທັບຢູ່ພູເຂົາໝາກກອກເທດຕໍ່ໜ້າພຣະວິຫານ ເປໂຕ, ຢາໂກໂບ, ໂຢຮັນ,
ແລະອັນເດອາ ມາທູນຖາມພຣະອົງຕ່າງຫາກວ່າ. 4"ຂໍໂຜດໃຫ້ພວກຂ້ານ້ອຍຊາບແດ່ວ່າ ເຫດ-
ການເຫລົ່ານີ້ຈະບັງເກີດຂຶ້ນເມື່ອໃດ ແລະສິ່ງໃດຈະເປັນໝາຍສຳຄັນວ່າ ການທັງປວງນີ້ໃກ້ຈະ
ສຳເລັດແລ້ວ." 5ພຣະເຢຊູຊົງຕອບເຂົາວ່າ, "ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໃດຫລອກລວງພວກທ່ານ
ໃຫ້ຫລົງ. 6ດ້ວຍວ່າຈະມີຫລາຍຄົນມາອ້າງນາມຂອງເຮົາວ່າ 'ເຮົານີ້ແຫລະ, ເປັນຜູ້ນັ້ນ' ແລະ
ຈະຫລອກລວງຫລາຍຄົນໃຫ້ຫລົງໄປ. 7ເມື່ອທ່ານທັງຫລາຍໄດ້ຍິນເລື່ອງການເສິກແລະຂ່າວ
ເລົ່າລືເລື່ອງການເສິກສົງຄາມນັ້ນ ຢ່າຕົກໃຈ ດ້ວຍວ່າເຫດການເຫລົ່ານີ້ຈຳເປັນຕ້ອງເກີດຂຶ້ນ
ແຕ່ວັນສຸດທ້າຍຍັງບໍ່ມາເຖິງ. 8ດ້ວຍວ່າປະເທດຕໍ່ປະເທດ, ອານາຈັກຕໍ່ອານາຈັກ, ຈະສູ້ຮົບກັນ
ທັງຈະເກີດແຜ່ນດິນໄຫວໃນບ່ອນຕ່າງໆ ແລະຈະເກີດຄວາມອຶດຢາກ ເຫດການເຫລົ່ານີ້ເປັນ
ເໝືອນຂັ້ນຕົ້ນຂອງຄວາມເຈັບປວດໃນການເກີດລູກ.
9"ແຕ່ຈົ່ງລະວັງຕົວໃຫ້ດີ ເພາະເຂົາຈະຈັບຕົວພວກທ່ານຂຶ້ນສານ, ແລະຈະຂ້ຽນພວກທ່ານໃນ
ໂຮງທຳມະເທດສະໜາ, ທັງຈະເອົາພວກທ່ານໄປຢືນຢູ່ຕໍ່ໜ້າຜູ້ປົກຄອງແລະກະສັດເພາະເຫັນ-
ແກ່ເຮົາ ເພື່ອຈະໄດ້ເປັນພະຍານແກ່ເຂົາ. 10ຂ່າວປະເສີດຈະຕ້ອງປະກາດທົ່ວປະຊາຊາດທັງ
ປວງກ່ອນ. 11ແຕ່ເມື່ອເຂົາມອບທ່ານໄວ້ນັ້ນ ຢ່າເປັນທຸກຮ້ອນໃຈກ່ອນວ່າຈະເວົ້າຢ່າງໃດ ແຕ່ຈົ່ງ
ເວົ້າຕາມທີ່ພຣະເຈົ້າຊົງໂຜດໃຫ້ທ່ານເວົ້າ ເພາະວ່າບໍ່ແມ່ນທ່ານເປັນຜູ້ເວົ້າ ແຕ່ແມ່ນພຣະວິນ-
ຍານບໍລິສຸດຊົງເປັນຜູ້ເວົ້າ. 12ອ້າຍກັບນ້ອງຕ່າງຄົນກໍຈະມອບກັນໄວ້ ພໍ່ຈະມອບລູກແລະລູກຈະ
ລຸກຂຶ້ນຕໍ່ສູ້ພໍ່ແມ່ໃຫ້ເຖິງແກ່ຄວາມຕາຍ. 13ຄົນທັງປວງຈະກຽດຊັງພວກທ່ານເພາະເຫັນແກ່ນາມ
ຂອງເຮົາ ແຕ່ຜູ້ໃດອົດທົນເຖິງທີ່ສຸດ ຜູ້ນັ້ນແຫລະ, ຈະໄດ້ລອດພົ້ນ.

## ຄວາມທຸກລຳບາກອັນໃຫຍ່

*(ມທ 24:15-28; ລກ 21:20-24)*

14"ແຕ່ເມື່ອໃດທ່ານທັງຫລາຍເຫັນສິ່ງທີ່ໜ້າກຽດຊັງ ຕັ້ງຢູ່ໃນບ່ອນບໍ່ສົມຄວນຈະຕັ້ງ (ໃຫ້ຜູ້
ອ່ານເຂົ້າໃຈເອົາ) ເມື່ອນັ້ນໃຫ້ຜູ້ທີ່ຢູ່ໃນແຂວງຢູດາຍປົບໜີໄປຍັງພູ. 15ຜູ້ທີ່ຢູ່ເທິງຫລັງຄາເຮືອນ

ຢ່າລົງມາໃນເຮືອນຂອງຕົນເກັບເອົາສິ່ງໃດອອກໄປ. [16]ສ່ວນຜູ້ທີ່ຢູ່ຕາມທົ່ງນາ ກໍຢ່າຕ່າວຄືນມາ
ເອົາເສື້ອຜ້າຂອງຕົນ. [17]ໃນວັນເຫລົ່ານັ້ນເປັນໜ້າເວທະນາເຕັມທີ່ ຕໍ່ຜູ້ຍິງທີ່ມີທ້ອງແລະມີລູກ
ອ່ອນກິນນົມຢູ່. [18]ຈົ່ງອ້ອນວອນຂໍເພື່ອເຫດການເຫລົ່ານີ້ຈະບໍ່ບັງເກີດຂຶ້ນໃນລະດູໜາວ. [19]ດ້ວຍ
ວ່າໃນຄາວນັ້ນຈະມີຄວາມທຸກລໍາບາກ ຢ່າງບໍ່ເຄີຍເກີດມາຕັ້ງແຕ່ພຣະເຈົ້າຊົງຕັ້ງຕົ້ນສ້າງໂລກ
ຈົນເຖິງບັດນີ້ ແລະເມື່ອໜ້າຈະບໍ່ມີອີກຕໍ່ໄປຈັກເທື່ອ. [20]ແລະຖ້າອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງບັນ-
ດານໃຫ້ວັນເຫລົ່ານັ້ນສັ້ນເຂົ້າ ກໍຈະບໍ່ມີມະນຸດຄົນໃດລອດພົ້ນໄດ້ ແຕ່ເພາະຊົງເຫັນແກ່ພວກທີ່
ພຣະອົງໄດ້ຊົງເລືອກໄວ້ແລ້ວນັ້ນ ພຣະອົງຈຶ່ງຊົງບັນດານໃຫ້ວັນເຫລົ່ານັ້ນສັ້ນເຂົ້າ. [21]ໃນເວລາ
ນັ້ນຖ້າຜູ້ໃດມາບອກພວກທ່ານວ່າ 'ເບິ່ງດູ, ອົງພຣະຄຣິດຢູ່ທີ່ນີ້' ຫລືວ່າ 'ເບິ່ງດູ ເພິ່ນຢູ່ທັ້ນ'
ຢ່າຊູ່ເຊື່ອ. [22]ດ້ວຍວ່າຈະມີພຣະຄຣິດທຽມແລະໝໍທຳນວາຍຂີ້ໂລບຫລາຍຄົນເກີດຂຶ້ນ ສະແດງ
ໝາຍສຳຄັນແລະການອັດສະຈັນຕ່າງໆ ເພື່ອຖ້າເປັນໄດ້ຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກ
ໄວ້ໃຫ້ຫລົງ. [23]ແຕ່ທ່ານທັງຫລາຍຈົ່ງລະວັງໃຫ້ດີ ເພາະເຮົາໄດ້ບອກທຸກສິ່ງໃຫ້ທ່ານຮູ້ໄວ້ກ່ອນ
ແລ້ວ.

## ເມື່ອບຸດມະນຸດສະເດັດມາ

*(ມທ 24:29-31; ລກ 21:25-28)*

[24]"ໃນວັນເຫລົ່ານັ້ນເມື່ອຄາວທຸກລຳບາກຜ່ານພົ້ນໄປແລ້ວ,
'ດວງອາທິດຈະມືດໄປ ແລະດວງຈັນຈະບໍ່ສ່ອງແສງ.
[25] ດວງດາວທັງປວງຈະຕົກລົງຈາກຟ້າ
ແລະບັນດາສິ່ງທີ່ມີອຳນາດໃນທ້ອງຟ້າຈະສະທ້ານຫວັ່ນໄຫວ'.

[26]ເມື່ອນັ້ນເຂົາຈະເຫັນ 'ບຸດມະນຸດສະເດັດມາໃນເມກ' ດ້ວຍລິດທານຸພາບອັນໃຫຍ່ແລະສະຫງ່າ
ລາສີອັນຮຸ່ງເຮືອງ. [27]ເມື່ອນັ້ນພຣະອົງຈະຊົງໃຊ້ພວກເທວະດາໃຫ້ຮວບຮວມຄົນທັງປວງທີ່ພຣະ-
ອົງຊົງເລືອກໄດ້ແລ້ວຈາກທິດທັງສີ່ ຕັ້ງແຕ່ທີ່ສຸດປາຍແຜ່ນດິນຈົນເຖິງທີ່ສຸດຂອບຟ້າ.

## ບົດຮຽນຈາກຕົ້ນເດື່ອເທດ

*(ມທ 24:32-35; ລກ 21:29-33)*

[28]"ຈົ່ງຮຽນຄຳອຸປະມາຈາກຕົ້ນເດື່ອເທດ ເມື່ອກິ່ງມັນແຕກໃບອ່ອນອອກ ພວກທ່ານກໍຮູ້ວ່າ
ລະດູຮ້ອນໃກ້ຈະເຖິງແລ້ວ. [29]ຢ່າງນັ້ນແຫລະ, ພວກທ່ານກໍເໝືອນກັນເມື່ອເຫັນເຫດການເຫລົ່າ-
ນັ້ນກຳລັງເກີດຂຶ້ນ ຈົ່ງຮູ້ວ່າພຣະອົງສະເດັດມາໃກ້ຈະເຖິງປະຕູແລ້ວ. [30]ເຮົາບອກພວກທ່ານ
ຕາມຈິງວ່າ ຄົນໃນສະໄໝນີ້ຈະບໍ່ລ່ວງລັບໄປກ່ອນເຫດການທັງປວງນີ້ບັງເກີດຂຶ້ນ. [31]ຟ້າແລະ
ດິນຈະລ່ວງພົ້ນໄປ ແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ.

## ບໍ່ມີໃຜຮູ້ວັນແລະເວລານັ້ນ

*(ມທ 24:36-44)*

[32]"ແຕ່ເລື່ອງວັນຫລືໂມງນັ້ນບໍ່ມີໃຜຮູ້ ແມ່ນເທວະດາໃນສະຫວັນຫລືພຣະບຸດກໍບໍ່ຮູ້ ຮູ້ແຕ່
ພຣະບິດາອົງດຽວ. [33]ຈົ່ງເຝົ້າລະວັງຢູ່ ເພາະພວກທ່ານບໍ່ຮູ້ວ່າເວລາກຳນົດນັ້ນຈະມາເຖິງເມື່ອ
ໃດ. [34]ປຽບເໝືອນຊາຍຜູ້ໜຶ່ງທີ່ອອກຈາກເຮືອນເດີນທາງໄປ ໄດ້ມອບອຳນາດໃຫ້ຂ້ອຍທຸກຄົນ

ໃຫ້ຮັບຮູ້ການງານຂອງໃຜລາວ ແລະສັ່ງຄົນຍາມໃຫ້ເຝົ້າປະຕູຢູ່. [35]ເຫດສັນນັ້ນທ່ານທັງຫລາຍ
ຈົ່ງເຝົ້າລະວັງຢູ່ ເພາະພວກທ່ານບໍ່ຮູ້ວ່າເຈົ້າເຮືອນຈະມາຍາມໃດ ຈະມາຫົວຄໍ່າ, ຫລືທ່ຽງຄືນ,
ຫລືເວລາໄກ່ຂັນ, ຫລືຮຸ່ງເຊົ້າ. [36]ຢ້ານວ່າຈະມາໃນທັນທີແລະພົບພວກທ່ານນອນຫລັບຢູ່. [37]ຊຶ່ງ
ເຮົາບອກພວກທ່ານ ເຮົາກໍບອກຄົນທັງປວງເໝືອນກັນວ່າ ຈົ່ງເຝົ້າລະວັງຢູ່."

# ບົດທີ 14

## ພວກຫົວໜ້າປອງຮ້າຍພຣະເຢຊູ

*(ມທ 26:1-5; ລກ 22:1-2; ຢຮ 11:15-53)*

[1]ຍັງອີກສອງວັນຈະເຖິງເທດສະການປັດສະຄາ ແລະເທດສະການກິນເຂົ້າຈີ່ບໍ່ມີເຊື້ອ ພວກ
ປະໂລຫິດຕົນໃຫຍ່ແລະພວກນັກທຳກໍຊອກຊ່ອງທາງຈະຈັບພຣະອົງ ດ້ວຍອຸບາຍຈຶ່ງຂ້າເສຍ.
[2]ຄືເຂົາເວົ້າກັນວ່າ, "ຢ່າເຮັດການນັ້ນໃນລະຫວ່າງວັນເທດສະການ ຢ້ານວ່າພົນລະເມືອງຈະ
ເກີດວຸ້ນວາຍ."

## ພຣະເຢຊູຊົງຮັບການຫົດສົງທີ່ເບັດທານີ

*(ມທ 26:6-13; ຢຮ 12:1-8)*

[3]ໃນເວລາທີ່ພຣະອົງປະທັບຢູ່ບ້ານເບັດທານີ ໃນເຮືອນຂອງຊີໂມນຄົນຂີ້ທູດ ເມື່ອຊົງນັ່ງຮັບ
ປະທານອາຫານຢູ່ ມີຍິງຜູ້ໜຶ່ງຖືອອມຫີນຂາວເຕັມດ້ວຍນໍ້າມັນຫອມນາຣະດາແທ້ທີ່ມີຄ່າແພງ
ຫລາຍ ເຂົ້າມາເຝົ້າພຣະອົງ ເມື່ອຫັກຄໍອອມແລ້ວຖອກນໍ້າມັນລົງໃສ່ພຣະສຽນຂອງພຣະອົງ.
[4]ແຕ່ມີບາງຄົນເຄືອງໃຈຈຶ່ງເວົ້າກັນວ່າ, "ເຫດໃດຈຶ່ງເຮັດໃຫ້ນໍ້າມັນນີ້ເສຍລ້າໆ. [5]ເພາະຖ້າຂາຍ
ນໍ້າມັນນີ້ກໍຄົງໄດ້ເງິນກວ່າສາມຮ້ອຍເດນາຣິອົນ ແລ້ວຈະແຈກໃຫ້ຄົນຈົນກໍໄດ້" ແລະເຂົາຈຶ່ງຈົ່ມ
ຕິຕຽນຍິງນັ້ນ. [6]ຝ່າຍພຣະເຢຊູຊົງກ່າວແກ່ເຂົາວ່າ, "ຊ່າງເທາະ ກວນໃຈລາວເຮັດຫຍັງ ນາງ
ໄດ້ເຮັດການດີແກ່ເຮົາແລ້ວ. [7]ດ້ວຍວ່າຄົນຍາກຈົນມີຢູ່ກັບພວກທ່ານສະເໝີ ພວກທ່ານຢາກເຮັດ
ການດີແກ່ເຂົາຍາມໃດກໍໄດ້ ແຕ່ຝ່າຍເຮົາບໍ່ຢູ່ກັບທ່ານສະເໝີໄປ. [8]ຊຶ່ງຍິງຜູ້ນີ້ໄດ້ເຮັດກໍເປັນການ
ສຸດຄວາມສາມາດຂອງລາວ ລາວມາຫົດສົງກາຍຂອງເຮົາກ່ອນ ເພື່ອການປົງສົບຂອງເຮົາ.
[9]ເຮົາບອກພວກທ່ານຕາມຈິງວ່າຂ່າວປະເສີດນີ້ຈະປ່າວປະກາດໄປເຖິງບ່ອນໃດໃນທົ່ວພິພົບ
ການທີ່ຍິງຜູ້ນີ້ໄດ້ເຮັດກໍຈະເລື່ອງລືໄປເຖິງບ່ອນນັ້ນເປັນທີ່ລະນຶກເຖິງນາງ."

## ຢູດາຕົກລົງຈະມອບພຣະເຢຊູໄວ້

*(ມທ 26:14-16; ລກ 22:3-6)*

[10]ຝ່າຍຢູດາອິສະກາຣິອົດ ເປັນຜູ້ໜຶ່ງໃນພວກສິບສອງຄົນນັ້ນ, ໄດ້ໄປຫາພວກປະໂລຫິດ
ຕົນໃຫຍ່ເພື່ອຈະມອບພຣະອົງໃຫ້ເຂົາ. [11]ເມື່ອເຂົາໄດ້ຍິນດັ່ງນັ້ນກໍດີໃຈແລະສັນຍາວ່າຈະເອົາ
ເງິນໃຫ້ ແລ້ວຢູດາກໍຊອກຫາໂອກາດທີ່ຈະມອບພຣະອົງໃຫ້ເຂົາ.

## ພຣະເຢຊູຖືສິນປັດສະຄາພ້ອມກັບສາວົກ

*(ມທ 26:17-45; ລກ 22:7-14, 21-23; ຢຮ 13:21-30)*

[12]ເມື່ອວັນຕົ້ນເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ເຖິງເວລາເຂົາເຄີຍຂ້າລູກແກະສຳລັບປັດ-

ສະຄານັ້ນ ພວກສາວົກມາທູນຖາມພຣະອົງວ່າ, "ຈະໃຫ້ພວກຂ້ານ້ອຍໄປຈັດແຈງປັດສະຄາໃຫ້
ທ່ານຮັບປະທານບ່ອນໃດ." 13ພຣະອົງຈຶ່ງຊົງໃຊ້ສາວົກສອງຄົນໄປໂດຍສັ່ງເຂົາວ່າ, "ຈົ່ງເຂົ້າໄປ
ໃນກຸງ ແລະຈະມີຊາຍຄົນໜຶ່ງທູນໝໍ້ນໍ້າມາພົບພວກທ່ານຈົ່ງຕາມຜູ້ນັ້ນໄປ. 14ລາວຈະເຂົ້າໄປໃນ
ເຮືອນຫລັງໃດ ຈົ່ງບອກເຈົ້າເຮືອນນັ້ນວ່າ 'ອາຈານຖາມວ່າ ຫ້ອງຮັບແຂກສຳລັບເຮົາທີ່ເຮົາຈະ
ກິນປັດສະຄາກັບພວກສາວົກຂອງເຮົາໄດ້ນັ້ນຢູ່ທີ່ໃດ'. 15ເຈົ້າຂອງເຮືອນຈະຊີ້ໃຫ້ພວກທ່ານເຫັນ
ຫ້ອງໃຫຍ່ຊັ້ນເທິງທີ່ຕົກແຕ່ງພ້ອມໄວ້ແລ້ວ ທີ່ນັ້ນແຫລະ, ຈົ່ງຈັດແຈງໄວ້ສຳລັບພວກເຮົາ."
16ສາວົກສອງຄົນນັ້ນຈຶ່ງໄດ້ອອກໄປ ແລ້ວເຂົ້າໃນກຸງກໍໄດ້ພົບເໝືອນດັ່ງພຣະອົງຊົງກ່າວແກ່ເຂົາ
ແລ້ວເຂົາໄດ້ຈັດແຈງປັດສະຄາໄວ້.

17ຄັນເຖິງເວລາຄໍ່າແລ້ວພຣະອົງກໍສະເດັດມາກັບສາວົກສິບສອງຄົນນັ້ນ. 18ເມື່ອເຂົາກຳລັງ
ນັ່ງຮັບປະທານອາຫານຢູ່ ພຣະເຢຊູຊົງກ່າວແກ່ເຂົາວ່າ, "ເຮົາບອກທ່ານທັງຫລາຍຕາມຈິງວ່າ
ຄົນໜຶ່ງໃນພວກທ່ານຈະທໍລະຍົດຕໍ່ເຮົາ ແມ່ນຜູ້ໜຶ່ງທີ່ກຳລັງຮັບປະທານອາຫານຢູ່ກັບເຮົານີ້
ແຫລະ." 19ຝ່າຍເຂົາກໍພາກັນທຸກໃຈ ແລະທູນຖາມພຣະອົງເທື່ອລະຄົນວ່າ, "ບໍ່ແມ່ນຂ້ານ້ອຍ
ຕີ້." 20ພຣະອົງຊົງຕອບເຂົາວ່າ "ເປັນຜູ້ໜຶ່ງໃນສິບສອງຄົນນີ້ ຄືຜູ້ທີ່ກຳລັງຈໍ້າຮ່ວມຊາມດຽວກັບ
ເຮົາ. 21ດ້ວຍວ່າ, ບຸດມະນຸດຈະສະເດັດໄປຕາມທີ່ໄດ້ຂຽນໄວ້ໃນພຣະຄຳພີເຖິງເລື່ອງເພິ່ນ ແຕ່
ວິບັດແກ່ຜູ້ທີ່ຈະທໍລະຍົດຕໍ່ບຸດມະນຸດ ຖ້າຜູ້ນັ້ນບໍ່ເກີດມາກໍດີກວ່າ."

## ພຣະເຢຊູຊົງຕັ້ງສິນມະຫາສະໜິດ

*(ມທ 26:26-30; ລກ 22:15-20; ຢຣ 11:23-25)*

22ລະຫວ່າງອາຫານມື້ນັ້ນ ພຣະເຢຊູຊົງຈັບເຂົ້າຈີ່ມາຂໍພຣະພອນແລ້ວ, ຊົງຫັກເຂົ້າຈີ່ນັ້ນຍື່ນ
ໃຫ້ພວກສາວົກໂດຍຊົງກ່າວວ່າ, "ຈົ່ງຮັບເທີນ ນີ້ແຫລະ, ຄືກາຍຂອງເຮົາ." 23ແລ້ວພຣະອົງຊົງ
ຈັບເອົາຈອກມາໂມທະນາພຣະຄຸນແລະຊົງຍື່ນໃຫ້ເຂົາ ແລະເຂົາກໍຮັບດື່ມທຸກຄົນ. 24ພຣະອົງໄດ້
ຊົງກ່າວແກ່ເຂົາວ່າ, "ນີ້ແຫລະ ຄືເລືອດຂອງເຮົາ ແມ່ນເລືອດອັນກ່ຽວກັບພຣະສັນຍາທີ່ຖອກ
ອອກເພື່ອຄົນຫລາຍຄົນ. 25ເຮົາບອກທ່ານທັງຫລາຍຕາມຈິງວ່າ ເຮົາຈະບໍ່ດື່ມນໍ້າຜົນອະງຸ່ນຕໍ່ໄປ
ອີກຈົນກວ່າວັນນັ້ນມາເຖິງ ຄືວັນທີ່ເຮົາຈະດື່ມອັນໃໝ່ໃນລາຊະແຜ່ນດິນຂອງພຣະເຈົ້າ." 26ເມື່ອ
ຮ້ອງເພງສັນລະເສີນແລ້ວ ເຂົາກໍພາກັນອອກໄປຍັງພູໝາກກອກເທດ.

## ຊົງກ່າວລ່ວງໜ້າໄວ້ວ່າເປໂຕຈະປະຕິເສດ

*(ມທ 26:30-35; ລກ 22:31-34; ຢຣ 13:36-38)*

27ພຣະເຢຊູຊົງກ່າວແກ່ພວກສາວົກວ່າ, "ພວກທ່ານທຸກຄົນຈະສະດຸດໃຈ ເພາະມີຄຳຂຽນໄວ້
ໃນພຣະຄຳພີວ່າ 'ເຮົາຈະປະຫານຜູ້ລ້ຽງແກະ ແລະແກະຝູງນັ້ນຈະແຕກຊະກັນໄປ'. 28ແຕ່ເມື່ອ
ຖືກຊົງບັນດານໃຫ້ເປັນຄືນມາແລ້ວ ເຮົາຈະໄປເຖິງແຂວງຄາລີເລກ່ອນໜ້າພວກທ່ານ." 29ເປ-
ໂຕໄດ້ທູນພຣະອົງວ່າ, "ເຖິງແມ່ນວ່າທຸກຄົນຈະສະດຸດໃຈ ສ່ວນຂ້ານ້ອຍບໍ່ສະດຸດໃຈ." 30ພຣະ-
ເຢຊູຊົງຕອບເປໂຕວ່າ, "ເຮົາບອກທ່ານຕາມຈິງວ່າ ໃນຄືນວັນນີ້ແຫລະ, ກ່ອນໄກ່ຈະຂັນສອງ
ເທື່ອທ່ານຈະປະຕິເສດເຮົາເຖິງສາມເທື່ອ." 31ແຕ່ເປໂຕທູນຕອບຢ່າງແຂງແຮງວ່າ, "ເຖິງແມ່ນ
ຂ້ານ້ອຍຈະຕ້ອງຕາຍກັບທ່ານ ຂ້ານ້ອຍຈະບໍ່ປະຕິເສດທ່ານຈັກເທື່ອ" ຝ່າຍພວກສາວົກກໍທູນ

ຢ່າງນັ້ນເໝືອນກັນທຸກຄົນ.

## ຊົງອ້ອນວອນໃນສວນເຄັດເຊມາເນ

*(ມທ 26:36-46; ລກ 22:39-46)*

32ພຣະເຢຊູໄດ້ສະເດັດພ້ອມກັບພວກສາວົກໄປບ່ອນໜຶ່ງຊື່ເຄັດເຊມາເນ ພຣະອົງຊົງກ່າວ
ກັບເຂົາວ່າ, "ຈົ່ງນັ່ງຢູ່ທີ່ນີ້ ເມື່ອເຮົາໄປອ້ອນວອນ." 33ພຣະອົງໄດ້ຊົງພາເປໂຕ, ຢາໂກໂບ,
ແລະໂຢຮັນໄປນຳ ແລ້ວຊົງເກີດວິຕົກແລະໜັກພຣະໄທຫລາຍ. 34ຈຶ່ງຊົງກ່າວກັບເຂົາວ່າ,
"ຈິດໃຈຂອງເຮົາກໍທຸກໜັກແທບຈະຕາຍຢູ່ແລ້ວ ຈົ່ງຄອຍເຝົ້າຢູ່ທີ່ນີ້ເທີນ." 35ເມື່ອໄດ້ສະເດັດໄປ
ອີກໜ້ອຍໜຶ່ງ ພຣະອົງຊົງໝູບພຣະກາຍລົງແລະອ້ອນວອນວ່າ ຖ້າເປັນໄປໄດ້ຂໍໃຫ້ໂມງນັ້ນ
ລ່ວງພົ້ນໄປຈາກພຣະອົງ. 36ພຣະອົງຊົງທູນວ່າ, "ອັບບາບິດາເອີຍ, ພຣະອົງອາດຊົງກະທຳສິ່ງ
ທັງປວງໄດ້ ຂໍໃຫ້ຈອກນີ້ເລື່ອນພົ້ນໄປຈາກລູກທ້ອນ ແຕ່ຂໍຢ່າໃຫ້ເປັນໄປຕາມໃຈປາດຖະໜາ
ຂອງລູກ ແຕ່ໃຫ້ເປັນໄປຕາມພຣະໄທຂອງພຣະອົງເທີນ." 37ພຣະອົງຈຶ່ງສະເດັດກັບຄືນມາຊົງ
ເຫັນເຂົານອນຫລັບຢູ່ ແລະຊົງກ່າວແກ່ເປໂຕວ່າ, "ຊີໂມນເອີຍ, ທ່ານນອນຫລັບຫລື ທ່ານບໍ່
ສາມາດຈະຄອຍຢູ່ຈັກຊົ່ວໂມງດຽວຫລື. 38ຈົ່ງເຝົ້າລະວັງແລະອ້ອນວອນຢູ່ເພື່ອຈະບໍ່ຕົກໃນການ
ທົດລອງ ຈິດໃຈພ້ອມຢູ່ແລ້ວກໍຈິງ ແຕ່ກາຍກໍອ່ອນກຳລັງ." 39ພຣະອົງຈຶ່ງສະເດັດໄປອ້ອນວອນ
ອີກເທື່ອໜຶ່ງຊົງກ່າວຄຳເໝືອນເທື່ອກ່ອນ. 40ຄັນສະເດັດກັບຄືນມາກໍຊົງເຫັນສາວົກນອນຫລັບຢູ່
ເພາະຕາຂອງເຂົາມືນບໍ່ຂຶ້ນ ແລະເຂົາບໍ່ຮູ້ວ່າຈະທູນປະການໃດ. 41ເມື່ອສະເດັດກັບມາເທື່ອທີ່
ສາມ ພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ, "ພວກທ່ານຍັງນອນຫລັບເຊົາເມື່ອຍຢູ່ຫລື ພໍເທາະເວລາ
ມາເຖິງແລ້ວ ເບິ່ງແມ, ບຸດມະນຸດກຳລັງຈະຖືກມອບໄວ້ໃນມືຂອງຄົນບາບ. 42ຈົ່ງລຸກຂຶ້ນພາກັນ
ໄປເທາະ ເບິ່ງແມ, ຜູ້ທີ່ມອບເຮົານັ້ນມາໃກ້ແລ້ວ."

## ການມອບແລະການຈັບພຣະເຢຊູໄປ

*(ມທ 26:37-46; ລກ 22:47-43; ຢຮ 18:2-12)*

43ເມື່ອພຣະອົງຍັງຊົງກ່າວບໍ່ທັນຂາດຄຳ ໃນທັນໃດນັ້ນຢູດາທີ່ເປັນຜູ້ໜຶ່ງໃນພວກສິບສອງຄົນ
ນັ້ນ ພ້ອມກັບປະຊາຊົນຖືດາບຖືໄມ້ຄ້ອນ ໄດ້ມາຈາກພວກປະໂລຫິດຕົນໃຫຍ່, ພວກນັກທຳ,
ແລະພວກເຖົ້າແກ່. 44ຜູ້ທີ່ຈະມອບພຣະອົງນັ້ນໄດ້ໃຫ້ສັນຍານແກ່ເຂົາວ່າ, "ເຮົາຈະຈູບຄຳນັບຜູ້
ໃດ ກໍແມ່ນຜູ້ນັ້ນແຫລະ ຈົ່ງຈັບກຸມເອົາໄປຮັກສາໄວ້ໃຫ້ດີ." 45ພໍຢູດາມາເຖິງກໍເຂົ້າມາຫາພຣະ-
ອົງທັນທີທູນວ່າ, "ອາຈານເຈົ້າຂ້າເອີຍ" ແລ້ວຈູບຄຳນັບພຣະອົງຢ່າງຮັກແພງ. 46ຝ່າຍຄົນ
ເຫລົ່ານັ້ນກໍລົງມືຈັບພຣະອົງໄວ້. 47ແຕ່ຜູ້ໜຶ່ງທີ່ຢືນຢູ່ທີ່ນັ້ນຊັກດາບອອກ ຟັນຂ້ອຍໃຊ້ຄົນໜຶ່ງຂອງ
ມະຫາປະໂລຫິດ ຖືກຫູຂາດເບື້ອງໜຶ່ງ. 48ພຣະເຢຊູຊົງຖາມເຂົາເຫລົ່ານັ້ນວ່າ, "ທ່ານທັງຫລາຍ
ຖືດາບຖືໄມ້ຄ້ອນອອກມາຈັບເຮົາເໝືອນຈັບໂຈນຫລື. 49ເຮົາໄດ້ຢູ່ກັບທ່ານທັງຫລາຍທຸກໆ ວັນ
ສັ່ງສອນໃນບໍລິເວນພຣະວິຫານ ແຕ່ພວກທ່ານບໍ່ໄດ້ຈັບເຮົາ ແຕ່ຂໍໃຫ້ພຣະຄຳພີທີ່ຂຽນໄວ້ກ່ຽວ
ກັບເລື່ອງນີ້ສຳເລັດເສຍທ້ອນ." 50ແລ້ວສາວົກທັງໝົດໄດ້ປະຖິ້ມພຣະອົງພາກັນໜີໄປ.

## ຊາຍໜຸ່ມຜູ້ທີ່ໜີໄປ

51ມີຊາຍໜຸ່ມຜູ້ໜຶ່ງຫົ່ມຜ້າປ່ານຜືນດຽວຕາມພຣະອົງໄປ ເຂົາກໍຈັບຊາຍໜຸ່ມນັ້ນ. 52ຊາຍນັ້ນ

ໄດ້ແກ້ຜ້າປ່ານຜືນນັ້ນຖິ້ມແລ່ນໜີໄປດ້ວຍຕົວເປົ່າ.

## ພຣະເຢຊູຊົງຢູ່ຕໍ່ໜ້າສານສູງສຸດ

*(ມທ 26:57-68; ລກ 22:54-55; ຢຮ 18:13-14, 19-24)*

53ເຂົາໄດ້ພາ ພຣະເຢຊູ ໄປຫາມະຫາປະໂລຫິດ ແລະມີພວກປະໂລຫິດຕົນໃຫຍ່, ພວກເຖົ້າ
ແກ່, ກັບພວກນັກທຳໄດ້ຊຸມນຸມພ້ອມກັນຢູ່ທີ່ນັ້ນ. 54ສ່ວນ ເປໂຕ ໄດ້ຕາມ ພຣະເຢຊູ ໄປໃນລະຍະ
ຫ່າງໄກ ຈົນເຂົ້າໄປເຖິງເດີ່ນບ້ານຂອງມະຫາປະໂລຫິດແລ້ວນັ່ງຜີງໄຟຢູ່ກັບພວກຍາມ. 55ພວກ
ປະໂລຫິດຕົນໃຫຍ່ກັບບັນດາສະມາຊິກສະພາຈຶ່ງຫາພະຍານມາເບີກຕໍ່ສູ້ ພຣະເຢຊູ ເພື່ອຈະຂ້າ
ພຣະອົງເສຍ ແຕ່ຫາຫລັກຖານບໍ່ໄດ້. 56ດ້ວຍມີຫລາຍຄົນເບີກພະຍານຕົວະຕໍ່ສູ້ພຣະອົງ ແຕ່ຄຳ
ຂອງເຂົາແຕກຕ່າງກັນ. 57ມີລາງຄົນຢືນຂຶ້ນເບີກພະຍານຕົວະຕໍ່ສູ້ພຣະອົງວ່າ, 58"ຂ້າພະເຈົ້າໄດ້
ຍິນຄົນນີ້ເວົ້າວ່າ, 'ຝ່າຍເຮົາຈະມ້າງພຣະວິຫານຫລັງນີ້ທີ່ສ້າງດ້ວຍມືມະນຸດ ແລະພາຍໃນສາມ
ວັນຈະສ້າງຂຶ້ນອີກຫລັງໜຶ່ງທີ່ບໍ່ໄດ້ເຮັດດ້ວຍມືມະນຸດ'." 59ເຖິງປານນັ້ນຄຳພະຍານຂອງເຂົາກໍບໍ່
ຖືກຕ້ອງກັນ. 60ມະຫາປະໂລຫິດໄດ້ຢືນຂຶ້ນຖ້າມກາງທີ່ປະຊຸມ ຖາມພຣະເຢຊູວ່າ, "ເຈົ້າບໍ່ຕອບ
ຫຍັງຫລື ຄຳພະຍານທີ່ຄົນເຫລົ່ານີ້ກ່າວຕໍ່ສູ້ເຈົ້າເປັນແນວໃດ." 61ແຕ່ພຣະອົງຊົງມິດຢູ່ ບໍ່ໄດ້
ຕອບປະການໃດມະຫາປະໂລຫິດຈຶ່ງຖາມພຣະອົງອີກວ່າ, "ເຈົ້າເປັນ ພຣະຄຣິດ ພຣະບຸດ ຂອງ
ພຣະເຈົ້າ ຜູ້ຊົງຄວາມສຸກຫລື." 62ພຣະເຢຊູ ຊົງຕອບວ່າ, "ເຮົາເປັນຜູ້ນັ້ນແຫລະ ແລະພວກທ່ານ
ຈະໄດ້ເຫັນບຸດມະນຸດນັ່ງຢູ່ເບື້ອງຂວາຂອງຜູ້ຊົງລິດທານຸພາບ ແລະກຳລັງສະເດັດມາໃນເມກ
ແຫ່ງຟ້າສະຫວັນ." 63ມະຫາປະໂລຫິດຜູ້ນັ້ນໄດ້ຈີກເສື້ອຂອງຕົນແລ້ວກ່າວວ່າ, "ພວກເຮົາຍັງຈະ
ຕ້ອງການພະຍານອັນໃດອີກ." 64ທ່ານທັງຫລາຍໄດ້ຍິນຄຳໝິ່ນປະໝາດ ພຣະເຈົ້າ ແລ້ວ ພວກ
ທ່ານຄິດເຫັນຢ່າງໃດ" ຂາປະຊຸມທັງໝົດຈຶ່ງເຫັນວ່າ ພຣະອົງຄວນຖືກໂທດປະຫານຊີວິດ. 65ມີ
ລາງຄົນຕັ້ງຕົ້ນຖົ່ມນ້ຳລາຍໃສ່ພຣະອົງ, ເອົາຜ້າມັດພຣະພັກຂອງພຣະອົງ, ທຸບຕີພຣະອົງ ດ້ວຍ
ເວົ້າແກ່ພຣະອົງວ່າ, "ທວາຍເບິ່ງແມ" ພວກຄົນໃຊ້ກໍໄດ້ຮັບເອົາພຣະອົງໄປຕົບຕີ.

## ເປໂຕປະຕິເສດພຣະເຢຊູ

*(ມທ 26:69-75; ລກ 22:56-62; ຢຮ 18:15-18, 25:27)*

66ເມື່ອ ເປໂຕ ຍັງຢູ່ທາງລຸ່ມກາງເດີ່ນບ້ານ ມີຍິງໃຊ້ຄົນໜຶ່ງຂອງມະຫາປະໂລຫິດຍ່າງມາ.
67ເມື່ອນາງເຫັນ ເປໂຕ ນັ່ງຜີງໄຟຢູ່ ນາງກໍຫລຽວເພ່ງເບິ່ງແລ້ວເວົ້າວ່າ, "ໂຕເຄີຍຢູ່ກັບໄທ ນາຊາ-
ເຣັດ ຄື ເຢຊູ ນັ້ນເໝືອນກັນ." 68ແຕ່ ເປໂຕ ປະຕິເສດວ່າ, "ທີ່ເຈົ້າເວົ້ານັ້ນຂ້ອຍບໍ່ຮູ້ເລື່ອງ ແລະບໍ່
ເຂົ້າໃຈ" ເປໂຕ ຈຶ່ງອອກໄປທີ່ປະຕູບ້ານແລ້ວໄກ່ກໍຂັນ. 69ເມື່ອຍິງໃຊ້ຄົນນັ້ນເຫັນ ເປໂຕ ກໍຕັ້ງຕົ້ນ
ບອກກັບຄົນທີ່ຢູ່ຫັ້ນອີກວ່າ, "ຄົນນີ້ແຫລະ, ເປັນພັກພວກກັບເຂົາເຫລົ່ານັ້ນ." 70ແຕ່ ເປໂຕ ໄດ້
ປະຕິເສດອີກ, ຫລັງຈາກນັ້ນໜ້ອຍໜຶ່ງ ພວກຄົນທີ່ຢືນຢູ່ຫັ້ນໄດ້ເວົ້າກັບ ເປໂຕ ອີກວ່າ, "ໂຕເປັນ
ພັກພວກກັບເຂົາເຫລົ່ານັ້ນແທ້ ເພາະໂຕເປັນໄທ ຄາລີເລ ເໝືອນກັນ." 71ແຕ່ ເປໂຕ ຕັ້ງຕົ້ນສະບົດ
ສາບານວ່າ, "ຄົນຜູ້ທີ່ມຶງເວົ້ານັ້ນກູບໍ່ຮູ້ຈັກ." 72ໃນທັນໃດນັ້ນໄກ່ກໍຂັນເປັນເທື່ອທີສອງ ເປໂຕ ຈຶ່ງ
ລະນຶກເຖິງຄຳທີ່ ພຣະເຢຊູ ຊົງບອກກັບຕົນວ່າ, "ກ່ອນໄກ່ຂັນສອງເທື່ອ ທ່ານຈະປະຕິເສດບໍ່ຮັບ
ຮູ້ເຮົາເຖິງສາມເທື່ອ" ເມື່ອຫວນຄຶດຂຶ້ນ ເປໂຕ ກໍຮ້ອງໄຫ້.

# ບົດທີ 15

## ພຣະເຢຊູຕໍ່ໜ້າປີລາດເຈົ້າເມືອງ

*(ມທ 27:1-2, 11-14; ລກ 23:1-5; ຢຮ 18:28-38)*

1ພໍຮຸ່ງເຊົ້າພວກປະໂລຫິດຕົ້ນໃຫຍ່, ພວກເຖົ້າແກ່, ພວກນັກທຳ, ແລະບັນດາສະມາຊິກສະ-
ພາໄດ້ປຶກສາກັນ ແລ້ວຈຶ່ງມັດ ພຣະເຢຊູ ພາໄປມອບໃຫ້ປີລາດ. 2ປີລາດ ຈຶ່ງຖາມພຣະອົງວ່າ,
“ເຈົ້າເປັນກະສັດຂອງຊາດຢິວຫລື” ພຣະອົງຊົງຕອບວ່າ, “ທ່ານເວົ້ານັ້ນຖືກແລ້ວ.” 3ຝ່າຍພວກ
ປະໂລຫິດຕົ້ນໃຫຍ່ໄດ້ກ່າວໂທດໃສ່ພຣະອົງຫລາຍປະການ. 4ປີລາດ ຈຶ່ງຖາມພຣະອົງອີກວ່າ,
“ເຈົ້າບໍ່ຕອບປະການໃດຫລື ເບິ່ງແມ, ເຂົາຟ້ອງເຈົ້າຫລາຍປະການປານນັ້ນ.” 5ແຕ່ພຣະເຢຊູບໍ່
ໄດ້ຊົງຕອບປະການໃດອີກ ຈົນປີລາດປະຫລາດໃຈ.

## ພຣະເຢຊູຊົງຖືກຄຳພິພາກສາໃຫ້ເຖິງສິ້ນພຣະຊົນ

*(ມທ 27:15-26; ລກ 23:13-25; ຢຮ 18:39-19:16)*

6ໃນຄາວເທດສະການນັ້ນປີລາດ ເຄີຍປ່ອຍນັກໂທດຄົນໜຶ່ງໃຫ້ເຂົາຕາມທີ່ເຂົາຮ້ອງຂໍ. 7ມີຄົນ
ໜຶ່ງຊື່ ບາຣາບາ ທີ່ຖືກຂັງຢູ່ໃນຈຳພວກຄົນກະບົດ ທີ່ໄດ້ຂ້າຄົນໃນການກະບົດນັ້ນ. 8ປະຊາຊົນ
ໄດ້ຂຶ້ນໄປຫາປີລາດ ຕັ້ງຕົ້ນຂໍໃຫ້ເພິ່ນເຮັດຕາມທີ່ເຄີຍເຮັດໃຫ້ເຂົານັ້ນ. 9ປີລາດໄດ້ຖາມເຂົາວ່າ,
“ເຈົ້າທັງຫລາຍຢາກໃຫ້ເຮົາປ່ອຍກະສັດຂອງຊາວຢິວ ໃຫ້ພວກເຈົ້າຫລື.” 10ເພາະເພິ່ນກຳລັງຮູ້ວ່າ
ພວກປະໂລຫິດຕົ້ນໃຫຍ່ໄດ້ມອບພຣະອົງໄວ້ດ້ວຍຄວາມອິດສາ. 11ແຕ່ພວກປະໂລຫິດຕົ້ນໃຫຍ່
ໄດ້ຍົວະຍົງປະຊາຊົນ ໃຫ້ຂໍປີລາດປ່ອຍ ບາຣາບາ ແທນ ພຣະເຢຊູ. 12ປີລາດ ຈຶ່ງຖາມເຂົາອີກ
ວ່າ, “ຖ້າຢ່າງນັ້ນຢາກໃຫ້ເຮົາເຮັດຢ່າງໃດແກ່ຜູ້ທີ່ພວກເຈົ້າເອີ້ນວ່າກະສັດຂອງຊາດຢິວ.” 13ເຂົາ
ຮ້ອງຂຶ້ນອີກວ່າ, “ຄຶງມັນໄວ້ທີ່ໄມ້ກາງແຂນ” 14ປີລາດຈຶ່ງຖາມເຂົາວ່າ, “ຄຶງເຮັດຫຍັງ ຄົນນີ້ໄດ້
ເຮັດຜິດອັນໃດ” ແຕ່ປະຊາຊົນແຮ່ງຮ້ອງຂຶ້ນອີກວ່າ, “ຄຶງໄວ້ທີ່ໄມ້ກາງແຂນ.” 15ປີລາດປາດ-
ຖະໜາຈະເອົາໃຈປະຊາຊົນຈຶ່ງປ່ອຍ ບາຣາບາ ໃຫ້ເຂົາເມື່ອໃຫ້ຂ້ຽນ ພຣະເຢຊູ ແລ້ວ ກໍມອບໃຫ້
ຄຶງໄວ້ທີ່ໄມ້ກາງແຂນ.

## ພວກທະຫານເຍາະເຍີ້ຍພຣະເຢຊູ

*(ມທ 27:27-31; ຢຮ 19:2-3)*

16ພວກທະຫານຈຶ່ງນຳພຣະອົງໄປໃນບໍລິເວນທີ່ເອີ້ນວ່າ ໄປຣໂຕຣຽມ ແລ້ວໄດ້ເອີ້ນພວກທະ-
ຫານທັງກອງ[ກ] ໃຫ້ມາໂຮມກັນທີ່ນັ້ນ. 17ເຂົາໄດ້ເອົາເສື້ອສີມ່ວງອ່ອນມານຸ່ງໃຫ້ພຣະອົງ ແລ້ວ
ເອົາເຄືອໜາມຖັກເປັນໂຄ້ງແທນພວງມາໄລສຸບໃສ່ພຣະສຽນຂອງພຣະອົງ. 18ແລະຕັ້ງຕົ້ນຄຳນັບ
ພຣະອົງທູນວ່າ, “ກະສັດຂອງຊາວຢິວ ເອີຍ, ຈົ່ງຊົງພຣະຈະເລີນເທີນ.” 19ເຂົາໄດ້ເອົາໄມ້ອໍ້ຕີ
ພຣະສຽນພຣະອົງ, ຖົ່ມນໍ້າລາຍໃສ່ພຣະອົງ, ແລະຄຸເຂົ່າລົງຄຳນັບພຣະອົງ. 20ເມື່ອໄດ້ເຍາະ-
ເຍີ້ຍພຣະອົງແລ້ວ ເຂົາໄດ້ຖອດເສື້ອສີມ່ວງອ່ອນໂຕນັ້ນອອກ ແລ້ວເອົາເຄື່ອງທົງຂອງພຣະອົງ
ມານຸ່ງໃຫ້ ແລະນຳພຣະອົງອອກໄປເພື່ອຕອກຕິດໄວ້ທີ່ໄມ້ກາງແຂນ.

---

[ກ]ຢ່າງນ້ອຍຈຳນວນຫ້າຮ້ອຍຄົນ. [ຂ]ສະໄໝນີ້ເຄີຍເວົ້າກັນວ່າ ເກົ້າໂມງເຊົ້າ. [ຄ]ສະໄໝນີ້ເຄີຍວ່າເວລາ
ທ່ຽງ. [ງ]ສະໄໝນີ້ເຄີຍວ່າ ບ່າຍສາມໂມງ.

## ການຄຶງໄວ້ທີ່ໄມ້ກາງແຂນ

*(ມທ 27:32-44; ລກ 23:26-43; ຢຮ 19:17-27)*

[21]ມີຄົນໜຶ່ງຊື່ຊີໂມນ ໄທເມືອງ ກີເຣເນ ເປັນພໍ່ຂອງ ອາເລັກຊັນໂດ ແລະ ຣູໂຟ ກຳລັງມາຈາກ
ບ້ານນອກຕາມທາງນັ້ນ ເຂົາກໍເກນເອົາຊີໂມນ ຜູ້ນັ້ນໃຫ້ແບກໄມ້ກາງແຂນຂອງພຣະອົງໄປ.
[22]ເຂົາພາພຣະອົງມາເຖິງບ່ອນໜຶ່ງຊື່ໂຄລະໂຄທາ (ແປວ່າບ່ອນກະໂຫລກຫົວ). [23]ເຂົາໄດ້ເອົາ
ເຫລົ້າແວງປົນກັບຢາງໄມ້ຫອມມາຖວາຍພຣະອົງແຕ່ພຣະອົງບໍ່ຊົງຮັບ. [24]ຄັນໄດ້ຄຶງພຣະອົງໄວ້
ທີ່ໄມ້ກາງແຂນແລ້ວ ເຂົາກໍເອົາເຄື່ອງທົງຂອງພຣະອົງມາຈົກສະຫລາກແບ່ງປັນກັນ ເມື່ອຮູ້ວ່າ
ໃຜຈະໄດ້ອັນໃດ. [25]ເມື່ອເຂົາຄຶງພຣະອົງໄວ້ນັ້ນເປັນເວລາສາມໂມງເຊົ້າ[ຂ] . [26]ເຂົາໄດ້ຂຽນຂໍ້ຫາ
ລົງໂທດໃສ່ພຣະອົງໄວ້ດັ່ງນີ້ວ່າ, "ກະສັດຂອງຊາດຢິວ." [27]ເຂົາໄດ້ເອົາໂຈນສອງຄົນຄຶງໄວ້
ພ້ອມກັບພຣະອົງ ເບື້ອງຂວາຄົນໜຶ່ງ ເບື້ອງຊ້າຍຄົນໜຶ່ງ. [28][ຕ້ອງສຳເລັດຕາມພຣະຄຳພີທີ່ຂຽນ
ໄວ້ວ່າ, "ເພິ່ນຖືກນັບເຂົ້າກັບຄົນລ່ວງລະເມີດ".] [29]ຝ່າຍຄົນທັງປວງທີ່ຍ່າງຜ່ານໄປມານັ້ນ ກໍ
ໝິ່ນປະໝາດພຣະອົງແລະສັ່ນຫົວໂດຍກ່າວວ່າ, "ເຮີຍ, ເຈົ້າຜູ້ມ້າງພຣະວິຫານແລະສ້າງຂຶ້ນໃໝ່
ໃນສາມວັນ, [30]ຈົ່ງຊ່ອຍຕົນເອງໃຫ້ພົ້ນດ້ວຍລົງມາຈາກໄມ້ກາງແຂນເສຍ." [31]ໃນທຳນອງດຽວ
ກັນນັ້ນ ພວກປະໂລຫິດຕົນໃຫຍ່ກັບພວກນັກທຳກໍພາກັນເຍາະເຍີ້ຍໃນລະຫວ່າງພວກເຂົາເອງ
ເໝືອນກັນວ່າ, "ມັນຊ່ອຍຄົນອື່ນໃຫ້ພົ້ນໄດ້ ແຕ່ຊ່ອຍຕົນເອງບໍ່ໄດ້. [32]ໃຫ້ພຣະຄຣິດກະສັດແຫ່ງ
ຊາດ ອິສຣາເອນ ລົງມາຈາກໄມ້ກາງແຂນດຽວນີ້ເທາະ ເພື່ອພວກເຮົາຈະໄດ້ເຫັນແລະເຊື່ອ"
ແລະສອງຄົນນັ້ນຜູ້ຖືກຄຶງໄວ້ພ້ອມກັນກັບພຣະອົງ ກໍໄດ້ກ່າວຄຳຫຍາບຊ້າຕໍ່ພຣະອົງເໝືອນກັນ.

## ການສິ້ນພຣະຊົນຂອງພຣະເຢຊູ

*(ມທ 27:45-56; ລກ 23:44-49; ຢຮ 19:28-30)*

[33]ຄັນເຖິງເວລາຫົກໂມງ[ຄ] ກໍບັງເກີດມືດມົວທົ່ວແຜ່ນດິນຈົນເຖິງເກົ້າໂມງ.[ງ] [34]ພໍເກົ້າໂມງ
ແລ້ວພຣະເຢຊູຊົງຮ້ອງສຽງດັງວ່າ, "ເອໂລອີ, ເອໂລອີ ລາມາ ຊະບັກທານີ" (ແປວ່າ, "ພຣະ-
ເຈົ້າຂອງຂ້າພຣະອົງ, ພຣະເຈົ້າຂອງຂ້າພຣະອົງ ເພາະເຫດໃດພຣະອົງຈຶ່ງປະຖິ້ມຂ້າພຣະອົງ
ເສຍ"). [35]ບາງຄົນທີ່ຢືນຢູ່ຫັ້ນເມື່ອໄດ້ຍິນກໍເວົ້າວ່າ, "ເບິ່ງແມ, ມັນຮ້ອງຫາເອລີຢາ." [36]ມີຄົນ
ໜຶ່ງແລ່ນໄປເອົາຟອງນ້ຳຈຸ່ມເຫລົ້າແວງສົ້ມໃຫ້ເຕັມ ຈິ່ງສຽບໃສ່ປາຍໄມ້ອໍ້ຍື່ນໃຫ້ພຣະອົງສະ-
ເຫວີຍໂດຍເວົ້າວ່າ, "ຟ້າວເທື່ອຖ້າເບິ່ງກ່ອນວ່າເອລີຢາຈະມາປົດມັນຫລືບໍ່." [37]ຝ່າຍພຣະເຢຊູ
ຊົງຮ້ອງສຽງດັງແລ້ວກໍສິ້ນພຣະຊົນ. [38]ຂະນະນັ້ນຜ້າກັ້ງໃນພຣະວິຫານກໍຖືກຊົງຈີກເປັນສອງ
ຕ່ອນຕັ້ງແຕ່ເທິງຈົນເຖິງລຸ່ມ. [39]ສ່ວນນາຍຮ້ອຍທະຫານທີ່ຢືນຢູ່ຕໍ່ ພຣະພັກພຣະອົງ ເມື່ອເຫັນ
ວ່າພຣະອົງສິ້ນພຣະຊົນຢ່າງນັ້ນແລ້ວຈຶ່ງເວົ້າວ່າ, "ຈິງແທ້ແລ້ວ, ທ່ານຜູ້ນີ້ແມ່ນພຣະບຸດຂອງ
ພຣະເຈົ້າ." [40]ແລະຍັງມີພວກແມ່ຍິງທີ່ກຳລັງມອງເບິ່ງແຕ່ໄກ ໃນພວກນັ້ນມີມາຣີອາໄທ
ມັກດາລາ, ມາຣີອາແມ່ຂອງຢາໂກໂບນ້ອຍແລະຂອງໂຢເຊ, ກັບນາງຊາໂລເມ. [41]ຜູ້ຍິງ
ເຫລົ່ານັ້ນໄດ້ຕິດຕາມແລະປະຕິບັດພຣະອົງເມື່ອຊົງຢູ່ໃນແຂວງຄາລີເລ ແລະແມ່ຍິງອື່ນອີກ
ຫລາຍຄົນທີ່ໄດ້ຂຶ້ນມາຍັງກຸງເຢຣູຊາເລັມກັບພຣະອົງໄດ້ຢູ່ທີ່ນັ້ນເໝືອນກັນ.

## ການບັນຈຸພຣະສົບຂອງພຣະເຢຊູ

*(ມທ 27:57-61; ລກ 23:50-56; ຢຮ 38:42)*

42ຄັນເຖິງເວລາຄໍ່າແລ້ວ ເນື່ອງໃນວັນນັ້ນເປັນວັນຈັດຕຽມຄືວັນກ່ອນວັນຊະບາໂຕ, 43ໂຢເຊັບ
ໄທບ້ານອາຣີມາທາຍ ຜູ້ເປັນສະມາຊິກແຫ່ງສານສູງສຸດທີ່ມີກຽດຄົນໜຶ່ງ ແລະເປັນຜູ້ທີ່ຄອງຫາ
ລາຊະແຜ່ນດິນຂອງພຣະເຈົ້າ ໄດ້ກ້າເຂົ້າໄປຫາປີລາດຂໍເອົາພຣະສົບພຣະເຢຊູ. 44ປີລາດກໍ
ປະຫລາດໃຈທີ່ພຣະເຢຊູສິ້ນພຣະຊົນແລ້ວ ຈຶ່ງເອີ້ນນາຍຮ້ອຍມາຖາມວ່າຕາຍເຫິງແລ້ວຫລື.
45ເມື່ອໄດ້ຮູ້ເລື່ອງຈາກນາຍຮ້ອຍແລ້ວປີລາດຈຶ່ງມອບພຣະສົບໃຫ້ແກ່ໂຢເຊັບ. 46ຝ່າຍໂຢເຊັບ
ໄດ້ຊື້ຜ້າປ່ານ ແລະເມື່ອອັນເຊີນພຣະສົບລົງມາຈາກໄມ້ກາງແຂນແລ້ວ ກໍເອົາຜ້າປ່ານນັ້ນຫຸ້ມຫໍ່
ໄວ້ ແລ້ວອັນເຊີນພຣະສົບໄປບັນຈຸວາງໄວ້ໃນອຸບໂມງ ທີ່ສະກັດໄວ້ໃນຫີນແລະກິ້ງກ້ອນຫີນອັດ
ປາກອຸບໂມງໄວ້. 47ຝ່າຍມາຣີອາໄທມັກດາລາ ແລະມາຣີອາແມ່ຂອງໂຢເຊ ກໍໄດ້ເຫັນບ່ອນທີ່
ໂຢເຊັບບັນຈຸພຣະສົບໄວ້ນັ້ນ.

# ບົດທີ 16

## ການຄືນພຣະຊົນ

*(ມທ 28:1-8; ລກ 24:1-12; ຢຮ 20:1-10)*

1ເມື່ອວັນຊະບາໂຕລ່ວງໄປແລ້ວ ມາຣີອາໄທມັກດາລາ, ມາຣີອາແມ່ຂອງຢາໂກໂບ, ແລະ
ນາງຊາໂລເມ ໄດ້ຊື້ເຄື່ອງຫອມເພື່ອຈະເອົາໄປຫົດສົງພຣະສົບຂອງພຣະອົງ. 2ເວລາຮຸ່ງເຊົ້າໃນ
ວັນຕົ້ນສັບປະດາ ພໍຕາເວັນອອກເຂົາກໍມາເຖິງອຸບໂມງ. 3ແລະເຂົາເວົ້າກັນຢູ່ວ່າ, "ໃຜໜໍຈະກິ້ງ
ກ້ອນຫີນນັ້ນອອກຈາກປາກອຸບໂມງໃຫ້ເຮົາ." 4ເມື່ອເຂົາເບິ່ງກໍເຫັນວ່າກ້ອນຫີນນັ້ນກິ້ງອອກແລ້ວ
(ເພາະເປັນຫີນກ້ອນໃຫຍ່ເຕັມທີ). 5ເມື່ອເຂົ້າໄປໃນອຸບໂມງແລ້ວ ເຂົາໄດ້ເຫັນຄົນໜຸ່ມຜູ້ໜຶ່ງນັ່ງຢູ່
ເບື້ອງຂວານຸ່ງເສື້ອຍາວສີຂາວພວກຍິງນັ້ນກໍສະທ້ານຕົກໃຈ. 6ຝ່າຍຄົນໜຸ່ມນັ້ນໄດ້ບອກເຂົາວ່າ,
"ຢ່າຕົກໃຈເທາະ ພວກນາງມາຊອກຫາພຣະເຢຊູໄທນາຊາເຣັດ ຜູ້ຖືກຄຶງໄວ້ທີ່ໄມ້ກາງແຂນ
ພຣະອົງຖືກຊົງບັນດານໃຫ້ເປັນຄືນມາແລ້ວ ພຣະອົງບໍ່ໄດ້ປະທັບຢູ່ທີ່ນີ້ ນີ້ແຫລະ, ບ່ອນທີ່ເຂົາ
ໄດ້ວາງພຣະສົບຂອງພຣະອົງໄວ້. 7ແຕ່ຈົ່ງໄປບອກພວກສາວົກຂອງພຣະອົງທັງເປໂຕວ່າ
'ພຣະອົງສະເດັດໄປຍັງແຂວງຄາລີເລກ່ອນເຈົ້າທັງຫລາຍແລະເຈົ້າທັງຫລາຍຈະເຫັນພຣະອົງຢູ່
ທີ່ນັ້ນ ເໝືອນພຣະອົງຊົງບອກໄວ້ແກ່ເຈົ້າທັງຫລາຍແລ້ວ'." 8ຍິງເຫລົ່ານັ້ນກໍອອກຈາກອຸບໂມງ
ປົບໜີໄປ ເພາະຄວາມວຸ້ນວາຍຢ້ານກົວຕົວສັ່ນໄດ້ຕົກໃສ່ເຂົາ ແລະບໍ່ໄດ້ເວົ້າຫຍັງໃຫ້ຜູ້ໃດຟັງ
ເພາະເຂົາຢ້ານ.

## ພຣະເຢຊູຊົງປະກົດຕົນໃຫ້ມາຣີອາມັກດາລາເຫັນ

*(ມທ 28:9-10; ຢຮ 20:11-18)*

9[ຄັນຮຸ່ງເຊົ້າວັນຕົ້ນສັບປະດາ ເມື່ອພຣະອົງຊົງເປັນຄືນມາແລ້ວ ພຣະອົງໄດ້ຊົງປະກົດຕົນ
ໃຫ້ນາງມາຣີອາໄທມັກດາລາເຫັນກ່ອນ ຄືມາຣີອາຄົນທີ່ພຣະອົງຊົງຂັບໄລ່ຜີອອກເຈັດໂຕນັ້ນ.
10ມາຣີອາຈຶ່ງໄປບອກພວກຄົນທີ່ເຄີຍຢູ່ກັບພຣະອົງແຕ່ກ່ອນຄົນເຫລົ່ານັ້ນກຳລັງເປັນທຸກ ແລະ

ຮ້ອງໄຫ້ຢູ່. [11]ເມື່ອເຂົາໄດ້ຍິນວ່າພຣະອົງຊົງພຣະຊົນຢູ່ ແລະທັງໄດ້ຍິນວ່ານາງ ມາຣີອາ ໄດ້ເຫັນ
ພຣະອົງແລ້ວ ເຂົາກໍບໍ່ເຊື່ອ.

## ພຣະເຢຊູຊົງປະກົດພຣະກາຍໃຫ້ສິດສອງຄົນເຫັນ

*(ລກ 24:13-35)*

[12]ພາຍລຸນມາ, ພຣະອົງໄດ້ຊົງປະກົດພຣະກາຍອີກຮູບໜຶ່ງໃຫ້ສິດສອງຄົນເຫັນ ໃນຂະນະທີ່
ເຂົາກຳລັງເດີນທາງອອກໄປບ້ານນອກ. [13]ສິດສອງຄົນນັ້ນຈຶ່ງກັບຄືນມາບອກສິດອື່ນໆ ແຕ່ເຂົາ
ບໍ່ໄດ້ເຊື່ອ.

## ພຣະເຢຊູຊົງຮັບສັ່ງແກ່ອັກຄະສາວົກສິບເອັດຄົນ

*(ມທ 28:16-20; ລກ 24:36-49; ຢຮ 20:19-26; ກຈກ 1:6-8)*

[14]ພາຍຫລັງ, ພຣະອົງຊົງປະກົດແກ່ສາວົກສິບເອັດຄົນນັ້ນ ເມື່ອເຂົານັ່ງຮັບປະທານອາຫານຢູ່
ພຣະອົງຊົງຕິຕຽນເຂົາ ເພາະເຂົາສົງໄສແລະມີໃຈແຂງກະດ້າງ ດ້ວຍເຫດທີ່ເຂົາບໍ່ໄດ້ເຊື່ອພວກ
ຄົນທີ່ໄດ້ເຫັນພຣະອົງເມື່ອພຣະອົງຊົງເປັນຄືນມາແລ້ວ. [15]ຝ່າຍພຣະອົງຊົງສັ່ງພວກສາວົກວ່າ,
"ທ່ານທັງຫລາຍຈົ່ງໄປທົ່ວໂລກ[ກ] ປະກາດຂ່າວປະເສີດແກ່ມະນຸດສະໂລກທັງໝົດ. [16]ຜູ້ທີ່ເຊື່ອ
ແລະຮັບບັບຕິສະມາແລ້ວຈະໄດ້ພົ້ນ ແຕ່ຜູ້ທີ່ບໍ່ເຊື່ອຈະຖືກໂທດ. [17]ໝາຍສຳຄັນເຫລົ່ານີ້ຈະເກີດມີ
ແກ່ຄົນທີ່ເຊື່ອຄື: ເຂົາຈະຂັບໄລ່ຜີອອກໄດ້ດ້ວຍພຣະນາມຂອງເຮົາ, ເຂົາຈະເວົ້າພາສາແປກໆ
ໄດ້. [18]ເຂົາຈະຈັບງູໄດ້ ຖ້າເຂົາດື່ມຂອງມີພິດຢ່າງໃດຈະບໍ່ເປັນອັນຕະລາຍແກ່ເຂົາ ເມື່ອເຂົາ
ວາງມືໃສ່ຄົນເຈັບປ່ວຍແລ້ວຄົນເຫລົ່ານັ້ນຈະດີເປັນປົກກະຕິ.

## ການສະເດັດຂຶ້ນສູ່ຟ້າສະຫວັນ

*(ລກ 24:50-53; ກຈກ 1:9-11)*

[19]ຄັນ ພຣະເຢຊູເຈົ້າ ໄດ້ຊົງກ່າວແກ່ເຂົາແລ້ວ ພຣະເຈົ້າ ກໍຊົງຮັບພຣະອົງໃຫ້ຂຶ້ນສູ່ຟ້າສະຫວັນ
ປະທັບເບື້ອງຂວາພຣະຫັດຂອງ ພຣະເຈົ້າ. [20]ພວກສາວົກເຫລົ່ານັ້ນຈຶ່ງອອກໄປປ່າວປະກາດທຸກ
ບ່ອນທຸກທີ່ ແລະອົງ ພຣະຜູ້ເປັນເຈົ້າ ຊົງຮ່ວມງານກັບເຂົາ ແລະຊົງເຮັດໃຫ້ຄຳປະກາດຂອງເຂົາ
ຢືນຢັນໂດຍໝາຍສຳຄັນທີ່ເກີດຂຶ້ນພ້ອມນັ້ນ.]

* * *

---

[ກ]ເຊີນເບິ່ງ ມທ 28:19.

# ຂ່າວປະເສີດເລື່ອງພຣະເຢຊູຄຣິດ
## ຮຽບຮຽງໂດຍ
# ລູກາ

# ບົດທີ 1
## ຄຳຄຳນັບແກ່ເທໂອຟີໂລ

1ມີຫລາຍຄົນໄດ້ລົງມືຮຽບຮຽງເລື່ອງເຫດການເຫລົ່ານັ້ນ ຊຶ່ງສຳເລັດແລ້ວໃນຖ້າມກາງເຮົາ
ທັງຫລາຍ. 2ຕາມທີ່ເຂົາຜູ້ໄດ້ເຫັນກັບຕາເອງຕັ້ງແຕ່ຕົ້ນແລະເປັນຜູ້ປະກາດພຣະທຳນັ້ນ ຈຶ່ງໄດ້
ສົ່ງສືບຕໍ່ມາໃຫ້ໝູ່ເຮົາຮູ້. 3ເຫດສັນນັ້ນທ່ານ ເທໂອຟີໂລ ທີ່ນັບຖືເອີຍ, ເນື່ອງຈາກຂ້າພະເຈົ້າເອງ
ໄດ້ສືບສວນຖ້ວນຖີ່ຕັ້ງແຕ່ຕົ້ນມາໃນສິ່ງເຫລົ່ານັ້ນ ຈຶ່ງເຫັນດີຈະຮຽບຮຽງເລື່ອງຕາມລຳດັບເພື່ອ
ປະໂຫຍດແດ່ທ່ານ. 4ເພື່ອທ່ານຈະໄດ້ຮູ້ຢ່າງຄັກແນ່ໃນຄວາມອັນເປັນແກ່ນເປັນສານຂອງເລື່ອງ
ເຫລົ່ານັ້ນ ຊຶ່ງມີຜູ້ແຈ້ງໃຫ້ທ່ານຊາບ.

## ທຳນວາຍເລື່ອງກຳເນີດຂອງໂຢຮັນບັບຕິສະໂຕ

5ໃນລັດຊະການຂອງ ເຮໂຣດ ກະສັດເມືອງຢູດາຍ ມີປະໂລຫິດຕົນໜຶ່ງຊື່ຊາຂາຣີຢາ ຢູ່ໃນ
ຜຽນຂອງ ອາບີຢາ ພັນລະຍາຂອງຊາຂາຣີຢາຢູ່ໃນເຊື້ອສາຍ ອາໂຣນ ຊື່ວ່າ ເອລີຊາເບັດ. 6ເຂົາ
ທັງສອງເປັນຄົນຊອບທຳຕໍ່ພຣະພັກ ພຣະເຈົ້າ ໂດຍຂັບຕາມຂໍ້ບັນຍັດແລະກົດໝາຍທັງຫລາຍ
ຂອງອົງ ພຣະຜູ້ເປັນເຈົ້າ ບໍ່ມີບ່ອນຕິເລີຍ. 7ເຂົາບໍ່ມີລູກເພາະ ເອລີຊາເບັດ ເປັນຍິງໝັນ ແລະ
ເຂົາທັງສອງກໍແກ່ຊະລາແລ້ວ.

8ເມື່ອ ຊາຂາຣີຢາ ຖືກຜຽນ ກຳລັງປະຕິບັດຕາມໜ້າທີ່ປະໂລຫິດຕໍ່ພຣະພັກ ພຣະເຈົ້າ. 9ສະ-
ຫລາກໄດ້ຕົກໃສ່ຕາມທຳນຽມປະໂລຫິດ ໃຫ້ທ່ານເຂົ້າໄປໃນພຣະວິຫານຂອງອົງ ພຣະຜູ້ເປັນເຈົ້າ
ເພື່ອເຜົາເຄື່ອງຫອມບູຊາ. 10ສ່ວນພົນລະເມືອງກໍໄຫວ້ວອນຢູ່ຂ້າງນອກໃນເວລາເຜົາເຄື່ອງຫອມ
ນັ້ນ. 11ແລ້ວມີເທວະດາຕົນໜຶ່ງຂອງອົງ ພຣະຜູ້ເປັນເຈົ້າ ໄດ້ມາປະກົດ ແກ່ ຊາຂາຣີຢາ ຢືນຢູ່
ເບື້ອງຂວາແທ່ນເຜົາເຄື່ອງຫອມບູຊານັ້ນ. 12ເມື່ອ ຊາຂາຣີຢາ ໄດ້ເຫັນກໍຢ້ານແລະຕົກໃຈ. 13ແຕ່
ເທວະດາຕົນນັ້ນໄດ້ບອກວ່າ, “ຊາຂາຣີຢາ ເອີຍ, ຢ່າຊູ່ຢ້ານ ເພາະຄຳອ້ອນວອນຂອງທ່ານໄດ້
ຊົງຟັງແລ້ວ ນາງ ເອລີຊາເບັດ ພັນລະຍາຂອງທ່ານຈະປະສູດບຸດຊາຍໃຫ້ທ່ານ ແລ້ວທ່ານຈົ່ງໃສ່
ຊື່ບຸດນັ້ນວ່າ ໂຢຮັນ. 14ທ່ານຈະມີຄວາມຊົມຊື່ນຍິນດີ ແລະຫລາຍຄົນຈະຍິນດີເພາະບຸດນັ້ນເກີດ
ມາ. 15“ເພາະວ່າບຸດນັ້ນຈະໄດ້ເປັນໃຫຍ່ຕໍ່ພຣະພັກຂອງອົງ ພຣະຜູ້ເປັນເຈົ້າ ເພິ່ນຈະບໍ່ດື່ມເຫລົ້າ
ແວງ ແລະເຫລົ້າປຸກຢ່າງໃດ ແລະຈະເຕັມໄປ ພຣະວິນຍານບໍລິສຸດ ຕັ້ງແຕ່ຈາກທ້ອງມານດາມາ.
16ເພິ່ນ ຈະ ນຳ ລູກຫລານ ຂອງ ອິສຣາເອນ ຫລາຍ ຄົນ ຫລົບຄືນ ມາຫາ ພຣະຜູ້ເປັນເຈົ້າ ຂອງ ເຂົາ.
17ເພິ່ນຈະອອກກ່ອນໜ້າພຣະອົງໂດຍສະແດງອາລົມແລະລິດເດດຂອງ ເອລີຢາ ຈະໃຫ້ບັນດາພໍ່
ກັບຄືນດີກັບລູກ ແລະໃຫ້ບັນດາຄົນທີ່ດື້ດ້ານກັບມາຫາປັນຍາຂອງຄົນສິນທຳ ເພື່ອຈັດຕຽມພົນ-

ລະເມືອງໄວ້ພ້ອມສຳລັບອົງພຣະຜູ້ເປັນເຈົ້າ.”

18ຊາຂາຣີຢາທູນເທວະດາຕົນນັ້ນວ່າ, “ຂ້ານ້ອຍຈະຮູ້ເຫດການນີ້ໄດ້ຢ່າງໃດ ເພາະຂ້ານ້ອຍກໍ
ເຖົ້າແລ້ວ ແລະພັນລະຍາຂອງຂ້ານ້ອຍກໍອາຍຸສູງຫລາຍແລ້ວ.” 19ຝ່າຍເທວະດາຕົນນັ້ນຈຶ່ງຕອບ
ວ່າ, “ເຮົາແມ່ນຄັບຣິເອນຊຶ່ງຢືນຢູ່ຕໍ່ພຣະພັກພຣະເຈົ້າ ແລະຊົງໃຊ້ໃຫ້ມາກ່າວກັບທ່ານແລະນຳ
ຂ່າວດີນີ້ມາບອກແກ່ທ່ານ. 20ເບິ່ງແມ! ທ່ານຈະເປັນຄົນໃບ້ແລະປາກບໍ່ໄດ້ຈົນເຖິງວັນທີ່ເຫດ-
ການເຫລົ່ານັ້ນຈະເກີດຂຶ້ນ ເພາະທ່ານບໍ່ໄດ້ເຊື່ອຖ້ອຍຄຳຂອງເຮົາທີ່ຈະສຳເລັດຕາມກຳນົດ.”

21ຝ່າຍພົນລະເມືອງກໍຄອຍຖ້າຊາຂາຣີຢາດ້ວຍຄວາມປະຫລາດໃຈ ເພາະທ່ານຊັກຊ້າຢູ່ໃນ
ພຣະວິຫານ. 22ເມື່ອເພິ່ນອອກມາແລ້ວກໍປາກນຳເຂົາບໍ່ໄດ້ ເຂົາຈຶ່ງສັງເກດຮູ້ວ່າເພິ່ນໄດ້ເຫັນນິ-
ມິດໃນພຣະວິຫານ ເພິ່ນໄດ້ສະແດງທ່າທີພາສາໃບ້ຕໍ່ເຂົາແລະຍັງເປັນໃບ້ຢູ່. 23ເມື່ອໝົດຜຽນ
ຂອງເພິ່ນແລ້ວເພິ່ນກໍກັບບ້ານ.

24ພາຍລຸນມາເອລີຊາເບັດພັນລະຍາຂອງເພິ່ນກໍມີທ້ອງ ແລ້ວຈຶ່ງໄປລີ້ຕົວຢູ່ໃນລະຫວ່າງຫ້າ
ເດືອນຈຶ່ງເວົ້າວ່າ. 25“ອົງພຣະຜູ້ເປັນເຈົ້າໄດ້ຊົງເຮັດຢ່າງນີ້ແກ່ຂ້ານ້ອຍ ໃນວັນທີ່ພຣະອົງໄດ້
ທອດພຣະເນດຂ້ານ້ອຍ ເພື່ອຊົງຍົກຄວາມນິນທາຂອງຂ້ານ້ອຍທີ່ມີຢູ່ຖ້າມກາງຄົນທັງຫລາຍ
ອອກເສຍ.”

## ທຳນວາຍເລື່ອງກຳເນີດຂອງພຣະເຢຊູ

26ເມື່ອເຖິງເດືອນຖ້ວນຫົກເທວະດາຄັບຣິເອນໄດ້ຮັບໃຊ້ຈາກພຣະເຈົ້າ ມາຍັງເມືອງໜຶ່ງໃນ
ແຂວງຄາລິເລຊື່ນາຊາເຣັດ. 27ມາຫາຍິງພົມມະຈາລີຄົນໜຶ່ງ ຊຶ່ງເປັນຄູ່ໝັ້ນຂອງຊາຍຄົນໜຶ່ງຊື່
ໂຢເຊັບ ຜູ້ເປັນເຊື້ອສາຍຂອງກະສັດດາວິດ ນາງນັ້ນຊື່ມາຣີອາ. 28ເມື່ອເທວະດາມາເຖິງນາງ
ແລ້ວຈຶ່ງເວົ້າວ່າ, “ຈົ່ງຈະເລີນເທີນ! ເຈົ້າຜູ້ທີ່ຊົງໂຜດພຣະກະລຸນາປານີຫລາຍ ອົງພຣະຜູ້ເປັນ-
ເຈົ້າກໍຊົງສະຖິດຢູ່ກັບເຈົ້າ.” 29ຝ່າຍມາຣີອາກໍຕົກສະທ້ານໃຈເພາະຖ້ອຍຄຳຂອງເທວະດານັ້ນ
ຈຶ່ງຮໍ່າເພິງວ່າຄຳທັກທາຍນີ້ຈະໝາຍຄວາມວ່າຢ່າງໃດ. 30ແລ້ວເທວະດາໄດ້ກ່າວກັບນາງວ່າ,
“ມາຣີອາເອີຍ, ຢ່າຊູ່ຢ້ານ ເພາະວ່າເຈົ້າເປັນທີ່ຊົງພຣະກະລຸນາໂຜດແລ້ວ. 31ເບິ່ງແມ! ເຈົ້າຈະ
ມີທ້ອງແລະປະສູດບຸດຊາຍ ຈົ່ງຕັ້ງຊື່ບຸດນັ້ນວ່າເຢຊູ. 32ບຸດນັ້ນຈະໄດ້ເປັນໃຫຍ່ ແລະຈະຊົງ
ເອີ້ນວ່າພຣະບຸດຂອງຜູ້ສູງສຸດ ອົງພຣະຜູ້ເປັນເຈົ້າຊົງປະທານພຣະທີ່ນັ່ງຂອງກະສັດດາວິດ ຜູ້
ເປັນບັນພະບຸລຸດຂອງທ່ານໃຫ້ແກ່ທ່ານ. 33ແລະທ່ານຈະສະເຫວີຍລາດຄຸ້ມຄອງເຊື້ອສາຍຂອງ
ຢາໂຄບສືບໆ ໄປເປັນນິດ ແລະລາຊະອານາຈັກຂອງທ່ານຈະບໍ່ຮູ້ສິ້ນສຸດ.” 34ຝ່າຍມາຣີອາຈຶ່ງ
ທູນເທວະດານັ້ນວ່າ, “ເຫດການນີ້ຈະເປັນໄປໄດ້ຢ່າງໃດ ເພາະຂ້ານ້ອຍຍັງບໍ່ທັນໄດ້ຮ່ວມຮູ້ກັບ
ຊາຍຈັກເທື່ອ.” 35ເທວະດາໄດ້ຕອບນາງວ່າ, “ພຣະວິນຍານບໍລິສຸດຈະສະເດັດລົງມາເຖິງເຈົ້າ
ແລະລິດເດດຂອງຜູ້ສູງສຸດຈະປົກຄຸມເຈົ້າໄວ້ ເຫດສັນນີ້ບຸດທີ່ຈະເກີດມານັ້ນຈະໄດ້ເອີ້ນວ່າ ບໍລິ-
ສຸດ ຄືພຣະບຸດຂອງພຣະເຈົ້າ.

36ເບິ່ງແມ! ເຖິງນາງເອລີຊາເບັດພີ່ນ້ອງຂອງເຈົ້າຜູ້ແກ່ຊະລາແລ້ວ ກໍຍັງມີທ້ອງຈະເກີດບຸດ
ຊາຍເໝືອນກັນ ບັດນີ້ນາງທີ່ເຂົາຖືວ່າເປັນຍິງໝັນກໍມີທ້ອງໄດ້ຫົກເດືອນແລ້ວ. 37ເພາະວ່າຝ່າຍ
ພຣະເຈົ້າບໍ່ມີສິ່ງໃດທີ່ເຫລືອພຣະກຳລັງ.” 38ສ່ວນມາຣີອາກໍທູນວ່າ, “ຂ້ານ້ອຍນີ້ແຫລະ, ເປັນ

ຂ້ອຍຍິງຂອງອົງ ພຣະຜູ້ເປັນເຈົ້າ ຂໍໃຫ້ບັງເກີດແກ່ຂ້ານ້ອຍຕາມຄຳຂອງເຈົ້າກູເທີ້ນ!" ແລ້ວເທ-
ວະດາຕົນນັ້ນໄດ້ຈາກນາງໄປ.

## ມາຣີອາໄປຢ້ຽມຢາມເອລີຊາເບັດ

[39]ຄາວນັ້ນ ມາຣີອາ ໄດ້ລຸກຂຶ້ນແລ້ວຮີບໄປຍັງເຂດພູເຂົາ ຄືໄປເຖິງເມືອງໜຶ່ງໃນແຂວງຢູດາຍ.
[40]ນາງໄດ້ເຂົ້າໄປໃນເຮືອນຂອງ ຊາຂາຣີຢາ ທັກທາຍນາງ ເອລີຊາເບັດ. [41]ພໍເມື່ອ ເອລີຊາເບັດ ໄດ້
ຍິນຄຳທັກທາຍຂອງ ມາຣີອາ ບຸດໃນທ້ອງຂອງຕົນກໍດີ້ນ ແລະ ເອລີຊາເບັດ ກໍເຕັມໄປດ້ວຍ
ພຣະວິນຍານບໍລິສຸດ. [42]ຈຶ່ງຮ້ອງຂຶ້ນດ້ວຍສຽງອັນດັງວ່າ, "ນາງໄດ້ຮັບພຣະພອນໃນລະຫວ່າງ
ພວກຜູ້ຍິງ ແລະບຸດໃນທ້ອງຂອງນາງໄດ້ຮັບພຣະພອນດ້ວຍ. [43]ເປັນສັນໃດຂ້ານ້ອຍຈຶ່ງໄດ້ຮັບ
ຄວາມ ເມດ ຕາຢ່າງນີ້ ຄື ມານ ດາຂອງ ອົງ ພຣະຜູ້ເປັນເຈົ້າ ຂອງ ຂ້ານ້ອຍ ໄດ້ ມາ ຫາ ຂ້ານ້ອຍ.
[44]ເພາະວ່າເບິ່ງແມ! ພໍສຽງທັກທາຍຂອງນາງເຂົ້າຫູຂ້ານ້ອຍ ລູກໃນທ້ອງຂອງຂ້ານ້ອຍໄດ້ດີ້ນ
ດ້ວຍຄວາມຍິນດີ. [45]ຄວາມສຸກມີແກ່ນາງທີ່ໄດ້ເຊື່ອວ່າ ຈະສຳເລັດຕາມພຣະຄຳທີ່ນາງໄດ້ຮັບ
ຈາກອົງ ພຣະຜູ້ເປັນເຈົ້າ."[ກ]

## ເພງສັນລະເສີນຂອງມາຣີອາ

[46]ສ່ວນ ມາຣີອາກໍກ່າວວ່າ,

"ຈິດໃຈຂອງຂ້າພະເຈົ້າສັນລະເສີນຍ້ອງຍໍອົງ ພຣະຜູ້ເປັນເຈົ້າ.
47 ແລະຈິດວິນຍານຂອງຂ້າພະເຈົ້າກໍເກີດຄວາມຍິນດີໃນ ພຣະເຈົ້າ
ຜູ້ຊົງ ໂຜດໃຫ້ຂ້າພະເຈົ້າພົ້ນ.
48 ເພາະພຣະອົງຊົງທອດພຣະເນດຖານະ
ອັນຍາກຕ່ຳຕ້ອຍແຫ່ງຂ້ອຍຍິງຂອງພຣະອົງ
ເບິ່ງແມ! ຕັ້ງແຕ່ໄປນີ້ຄົນທຸກສະໄໝ
ຈະເອີ້ນຂ້າພະເຈົ້າວ່າຜາສຸກ.
49 ເພາະວ່າຜູ້ຊົງລິດໄດ້ຊົງກະທຳການໃຫຍ່ແກ່ຂ້າພະເຈົ້າ
ພຣະນາມຂອງພຣະອົງກໍບໍລິສຸດ.
50 ພຣະກະລຸນາຂອງພຣະອົງກໍມີ
ແກ່ບັນດາຜູ້ຢຳເກງພຣະອົງ
ທັງຊົ່ວນີ້ແລະຊົ່ວໜ້າສືບໆໄປ.
51 ພຣະອົງຊົງສະແດງລິດດ້ວຍພຣະກອນຂອງພຣະອົງ
ພຣະອົງຊົງກະທຳໃຫ້ຄົນທີ່ມີໃຈຄຶດຈອງຫອງ
ພັດພາກຈາກກັນ.
52 ພຣະອົງຊົງຖອດເຈົ້ານາຍລົງຈາກພຣະທີ່ນັ່ງ
ແລະໄດ້ຊົງຍົກຜູ້ຍາກຕ່ຳຂຶ້ນ.

[ກ]ຫລືວ່າ "ນາງທີ່ໄດ້ເຊື່ອກໍເປັນສຸກ ເພາະວ່າຈະສຳເລັດຕາມພຣະຄຳທີ່ນາງໄດ້ຮັບຈາກອົງພຣະຜູ້ເປັນ-
ເຈົ້າ."

53 ພຣະອົງຊົງໂຜດໃຫ້ຄົນອຶດຢາກອີ່ມດ້ວຍຂອງດີ
ແລະຊົງກະທຳໃຫ້ຄົນຮັ່ງມີໜີໄປມືເປົ່າ.
54 ພຣະອົງຊົງຊ່ອຍ ອິສຣາເອນ ຜູ້ຮັບໃຊ້ຂອງພຣະອົງ
ຄືພຣະອົງຊົງຈື່ຈຳພຣະເມດຕາຂອງພຣະອົງ.
55 ທີ່ມີຕໍ່ ອັບຣາຮາມ ແລະຕໍ່ເຊື້ອສາຍຂອງເພິ່ນເປັນນິດ
ຕາມທີ່ພຣະອົງໄດ້ຊົງບອກໄວ້
ກັບບັນພະບຸລຸດຂອງພວກເຮົາ.”
56ແລ້ວ ມາຣີອາ ໄດ້ອາໃສຢູ່ກັບນາງອາລີຊາເບັດປະມານສາມເດືອນ ຈຶ່ງໄດ້ກັບຄືນໄປເຮືອນ
ຂອງຕົນ.

## ເລື່ອງກຳເນີດຂອງໂຢຮັນບັບຕິສະໂຕ

57ຄັນຖ້ວນວັນ ເວລາທີ່ນາງ ເອລີຊາເບັດ ຈະໄດ້ລູກແລ້ວ ນາງກໍໄດ້ປະສູດລູກເປັນຜູ້ຊາຍ.
58ເມື່ອ ເພື່ອນບ້ານ ແລະພວກຍາດຕິພີ່ນ້ອງ ໄດ້ຍິນຂ່າວວ່າ ພຣະເຈົ້າ ໄດ້ຊົງສະແດງພຣະມະຫາ
ກະລຸນາແກ່ນາງ ເຂົາກໍພາກັນຊົມຊື່ນຍິນດີຮ່ວມກັນກັບນາງ.
59ຄັນເຖິງວັນຖ້ວນແປດ ເຂົາກໍພາກັນມາໃຫ້ເດັກນ້ອຍນັ້ນຮັບພິທີຕັດ ແລະເຂົາຈະໃສ່ຊື່ເດັກ-
ນ້ອຍວ່າຊາຂາຣີຢາ ຕາມຊື່ຂອງບິດາ. 60ຝ່າຍມານດາຈຶ່ງຕອບວ່າ, “ບໍ່ແມ່ນ ແຕ່ຕ້ອງໃສ່ຊື່ວ່າ
ໂຢຮັນ.” 61ເຂົາພາກັນກ່າວ ແກ່ນາງວ່າ, “ໃນພວກພີ່ນ້ອງ ຂອງ ເຈົ້າບໍ່ ມີໃຜທີ່ ມີຊື່ຢ່າງນັ້ນ.”
62ແລ້ວ ເຂົາ ຈຶ່ງ ສະແດງ ທ່າ ທີ ພາສາ ໃບ້ ຖາມ ບິດາ ວ່າ, “ຢາກ ໃສ່ ຊື່ ເດັກນ້ອຍ ນັ້ນ ວ່າ ຢ່າງ ໃດ.”
63ເພິ່ນຈຶ່ງຂໍເອົາກະດານມາຂຽນວ່າ, “ຊື່ຂອງເດັກນ້ອຍນັ້ນຄື ໂຢຮັນ” ຄົນທັງປວງກໍປະຫລາດ
ໃຈ. 64ໃນທັນໃດນັ້ນເພິ່ນອອກສຽງໄດ້ແລະລີ້ນກໍອ່ອນ ແລ້ວເພິ່ນໄດ້ກ່າວສັນລະເສີນ ພຣະເຈົ້າ.
65ເພື່ອນບ້ານທັງປວງກໍເກີດຄວາມຢ້ານ ແລະ ເຫດການທັງປວງນັ້ນກໍຊ່າລືໄປທົ່ວເຂດພູແຂວງ
ຢູດາຍ. 66ບັນດາຄົນທີ່ໄດ້ຍິນຂ່າວເຫລົ່ານີ້ກໍເກັບໄວ້ໃນໃຈແລະເວົ້າວ່າ, “ລູກນ້ອຍນັ້ນຈະເປັນ
ຢ່າງໃດໜໍ” ດ້ວຍວ່າພຣະຫັດຂອງອົງ ພຣະຜູ້ເປັນເຈົ້າກໍສະຖິດຢູ່ກັບນຳເດັກນ້ອຍນັ້ນ.

## ຄຳທຳນວາຍຂອງຊາຂາຣີຢາ

67ຝ່າຍຊາຂາຣີຢາຜູ້ເປັນບິດາກໍເຕັມໄປດ້ວຍ ພຣະວິນຍານບໍລິສຸດ ຈຶ່ງໄດ້ທຳນວາຍວ່າ,
68 “ຈົ່ງສັນລະເສີນຜູ້ຊົງເປັນ ພຣະເຈົ້າ ຂອງ ອິສຣາເອນ
ດ້ວຍພຣະອົງໄດ້ຊົງຢ້ຽມຢາມ
ແລະໄດ້ຊົງໄຖ່ເອົາພົນລະເມືອງຂອງພຣະອົງ.
69 ແລະໄດ້ຊົງໃຫ້ຜູ້ຊົງລິດຜູ້ໜຶ່ງເກີດຂຶ້ນ
ໃນວົງສາຂອງ ດາວິດ ຜູ້ຮັບໃຊ້ຂອງພຣະອົງ
ເພື່ອເປັນຜູ້ຊົງໂຜດໃຫ້ພົ້ນຂອງພວກເຮົາ.
70 ຕາມທີ່ພຣະອົງໄດ້ຊົງກ່າວໄວ້ຕັ້ງແຕ່ບູຮານ
ໂດຍປາກຂອງຜູ້ປະກາດພຣະທຳບໍລິສຸດຂອງພຣະອົງ.
71 ຄືຊົງໃຫ້ພົ້ນຈາກສັດຕູທັງຫລາຍຂອງພວກເຮົາ

ແລະພົ້ນຈາກມືຄົນທັງປວງທີ່ຊັງເຮົາ.
72 ດັ່ງນັ້ນຈຶ່ງສະແດງພຣະກະລຸນາ
ຊຶ່ງຊົງສັນຍາແກ່ບັນພະບຸລຸດຂອງພວກເຮົາ
ແລະຊົງລະນຶກເຖິງພຣະສັນຍາອັນບໍລິສຸດຂອງພຣະອົງ.
73 ຄືຄຳສາບານຊຶ່ງພຣະອົງໄດ້ຊົງສາບານໄວ້
ກັບອັບຣາຮາມບັນພະບຸລຸດຂອງເຮົາວ່າ,
74 ເມື່ອເຮົາພົ້ນຈາກມືສັດຕູທັງຫລາຍຂອງເຮົາແລ້ວ
ຈະຊົງໂຜດໃຫ້ເຮົາໄດ້ບົວລະບັດພຣະອົງ
ໂດຍປາສະຈາກຄວາມຢ້ານ,
75 ດ້ວຍໃຈສັດຊື່ແລະດ້ວຍຄວາມຊອບທຳ
ຕໍ່ພຣະພັກພຣະອົງຕະຫລອດຊີວິດຂອງພວກເຮົາ.
76 ຝ່າຍເຈົ້າລູກນ້ອຍເອີຍ, ເຂົາຈະເອີ້ນເຈົ້າວ່າ
ຜູ້ປະກາດພຣະທຳຂອງຜູ້ສູງສຸດ
ເພາະວ່າເຈົ້າຈະໄປກ່ອນໜ້າອົງພຣະຜູ້ເປັນເຈົ້າ
ແລະຈັດແຈງບັນດາທາງຂອງພຣະອົງ.
77 ເພື່ອຈະໃຫ້ພົນລະເມືອງຂອງພຣະອົງຮູ້ເຖິງຄວາມພົ້ນ
ໂດຍການຊົງໂຜດຍົກຄວາມຜິດບາບຂອງເຂົາ.
78 ດ້ວຍພຣະໄທເມດຕາກະລຸນາ
ແຫ່ງພຣະເຈົ້າຂອງພວກເຮົາ
ແສງສະຫວ່າງໃນຍາມຮຸ່ງເຊົ້າຈາກທີ່ສູງ
ໄດ້ມາຢ້ຽມຢາມພວກເຮົາ.
79 ເພື່ອຈະສ່ອງສະຫວ່າງແກ່ຄົນທັງຫລາຍທີ່ຢູ່ໃນບ່ອນມືດ
ແລະຢູ່ໃນເງົາຂອງຄວາມຕາຍ
ເພື່ອຈະນຳພາຕີນຂອງເຮົາໄປໃນທາງສະຫງົບສຸກ."

80ຝ່າຍລູກນ້ອຍນັ້ນກໍໃຫຍ່ຂຶ້ນແລະຈິດວິນຍານກໍມີກຳລັງທະວີຂຶ້ນ ເພິ່ນໄດ້ອາໃສຢູ່ໃນປ່າຈົນ
ເຖິງວັນທີ່ຈະໄດ້ມາປະກົດແກ່ພວກອິສຣາເອນ.

# ບົດທີ 2

## ພຣະກຳເນີດຂອງພຣະເຢຊູ

*(ມທ 1:18– 25)*

1ຢູ່ມາໃນຄາວນັ້ນມີຄຳສັ່ງຈາກກາຍຊາໂອຄຸດໂຕໃຫ້ຈົດທະບຽນສຳມະໂນຄົວທົ່ວແຜ່ນດິນ.
2ການຈົດທະບຽນສຳມະໂນຄົວເທື່ອຕົ້ນນີ້ ເກີດຂຶ້ນເມື່ອເວລາກີເຣນີໂອເປັນຜູ້ປົກຄອງແຂວງຊີ-
ເຣຍ. 3ຄົນທັງປວງຕ່າງຄົນກໍຕ່າງໄປຂຶ້ນທະບຽນຍັງເມືອງຂອງຕົນ. 4ຝ່າຍໂຢເຊັບກໍຂຶ້ນໄປຈາກ

ເມືອງ ນາຊາເຣັດ ແຂວງ ຄາລີເລ ເຖິງເມືອງຂອງ ດາວິດ ຊື່ ເບັດເລເຮັມ ແຂວງ ຢູດາຍ ເພາະເພິ່ນ
ເປັນ ເຊື້ອສາຍ ແລະວົງສະກຸນດຽວກັບ ດາວິດ. [5]ເພື່ອຈະຂຶ້ນທະບຽນສຳມະໂນຄົວພ້ອມກັບນາງ
ມາຣີອາ ຄູ່ໝັ້ນຂອງຕົນ ສ່ວນ ມາຣີອາ ກໍກຳລັງມີທ້ອງຢູ່. [6]ເມື່ອເຂົາທັງສອງຍັງຢູ່ທີ່ນັ້ນກໍເຖິງເວ-
ລາທີ່ ມາຣີອາ ຈະປະສູດບຸດ. [7]ນາງຈຶ່ງໄດ້ປະສູດບຸດຜູ້ກົກ ເອົາຜ້າອ້ອມພັນແລະວາງໄວ້ໃນຮາງ
ຫຍ້າ ເພາະບໍ່ມີບ່ອນຫວ້າງສຳລັບເຂົາໃນໂຮງແຮມ.

## ເທວະດາປະກົດແກ່ບັນດາຜູ້ລ້ຽງແກະ

[8]ໃນ ແຖບນັ້ນມີພວກລ້ຽງ ແກະທີ່ນອນ ເຝົ້າຝູງ ແກະຂອງ ເຂົາຢູ່ທົ່ງ ໃນ ເວລາກາງຄືນ. [9]ແລະມີ
ເທວະດາຕົນໜຶ່ງຂອງອົງ ພຣະຜູ້ເປັນເຈົ້າ ໄດ້ມາປະກົດແກ່ເຂົາ ແລະລັດສະໝີຂອງອົງ ພຣະຜູ້-
ເປັນເຈົ້າ ໄດ້ສ່ອງຮອບເຂົາ ແລະເຂົາໄດ້ຕົກສະທ້ານໃຈຫລາຍ. [10]ຝ່າຍເທວະດາຕົນນັ້ນກໍກ່າວຕໍ່
ເຂົາວ່າ, "ຢ່າຊູ່ຢ້ານ ເພາະນີ້ແຫລະ, ເຮົານຳເອົາຂ່າວດີມາປະກາດໃຫ້ພວກເຈົ້າຮູ້ ຊຶ່ງເປັນທີ່
ຊື່ນຊົມຍິນດີອັນໃຫຍ່ແກ່ພົນລະເມືອງທັງໝົດ. [11]ເພາະວ່າໃນວັນນີ້ພຣະຜູ້ຊົງ ໂຜດໃຫ້ພົ້ນອົງໜຶ່ງ
ຄື ພຣະຄຣິດ ເຈົ້າ ມາບັງເກີດໃນເມືອງ ດາວິດ ສຳລັບເຈົ້າທັງຫລາຍ. [12]ອັນນີ້ຈະເປັນໝາຍສຳຄັນ
ແກ່ເຈົ້າທັງຫລາຍຄືພວກເຈົ້າຈະໄດ້ພົບກຸມມານຕົນໜຶ່ງພັນຜ້າອ້ອມນອນຢູ່ໃນຮາງຫຍ້າ." [13]ໃນ
ທັນໃດນັ້ນມີກອງທັບສະຫວັນໝູ່ໃຫຍ່ມາຢູ່ກັບ ເທວະດາຕົນນັ້ນ ຮ່ວມສັນລະເສີນ ພຣະເຈົ້າ ວ່າ.

[14] "ພຣະລັດສະໝີຈົ່ງມີແດ່ ພຣະເຈົ້າ ໃນທີ່ສູງສຸດ
ແລະທີ່ແຜ່ນດິນ ໂລກຈົ່ງມີສັນຕິສຸກ
ແກ່ມະນຸດທັງປວງທີ່ພຣະອົງຊົງຊອບພຣະໄທນັ້ນ."

[15]ເມື່ອ ເທວະດາ ເຫລົ່ານັ້ນ ໄປ ຈາກ ເຂົາຂຶ້ນສູ່ສະຫວັນ ແລ້ວ ພວກລ້ຽງ ແກະ ໄດ້ ເວົ້າກັນວ່າ,
"ເຮົາພາກັນໄປເມືອງ ເບັດເລເຮັມ ເທາະ ໄປເບິ່ງເຫດການທີ່ເກີດຂຶ້ນ ຊຶ່ງອົງ ພຣະຜູ້ເປັນເຈົ້າ ໄດ້
ຊົງ ແຈ້ງ ແກ່ເຮົານັ້ນ." [16]ເຂົາກໍຮີບໄປແລ້ວພົບ ມາຣີອາ ກັບ ໂຢເຊັບ ແລະ ເຫັນພຣະກຸມມານນັ້ນ
ນອນຢູ່ໃນຮາງຫຍ້າ. [17]ເມື່ອເຂົາໄດ້ເຫັນກໍເລົ່າເລື່ອງທີ່ເຂົາໄດ້ຍິນເຖິງກຸມມານນັ້ນ. [18]ຄົນທັງ
ປວງທີ່ໄດ້ຍິນກໍປະຫລາດໃຈດ້ວຍຖ້ອຍຄຳທີ່ພວກລ້ຽງແກະໄດ້ບອກແກ່ເຂົາ. [19]ຝ່າຍ ມາຣີອາ ກໍ
ເກັບບັນດາສິ່ງເຫລົ່ານີ້ໄວ້ໃນໃຈ ແລະຄຶດຮໍ່າເພິງຢູ່. [20]ພວກລ້ຽງແກະຈຶ່ງກັບໄປຍ້ອງຍໍສັນລະ-
ເສີນ ພຣະເຈົ້າ ເພາະ ເຫດການທັງປວງທີ່ເຂົາໄດ້ຍິນແລະໄດ້ເຫັນ ຕາມທີ່ໄດ້ບອກໄວ້ກັບເຂົາ
ນັ້ນ.

[21]ເມື່ອຄົບແປດວັນແລ້ວ ເປັນວັນໃຫ້ພຣະກຸມມານນັ້ນຮັບພິທີຕັດ ເຂົາຈຶ່ງໃສ່ຊື່ພຣະກຸມມານ
ນັ້ນວ່າ ເຢຊູ ຕາມທີ່ ເທວະດາ ໄດ້ບອກໄວ້ກ່ອນ ເມື່ອພຣະກຸມມານນັ້ນຍັງບໍ່ໄດ້ປະຕິສົນທິໃນ
ທ້ອງ.

## ການຖວາຍກຸມມານເຢຊູໃນພຣະວິຫານ

[22]ເມື່ອ ເຖິງ ເວລາທີ່ຈະທຳພິທີຊຳລະຕົວໃຫ້ສະອາດ ເຂົາຈຶ່ງ ເອົາພຣະກຸມມານໄປຍັງກຸງ ເຢຣູ-
ຊາເລັມ ເພື່ອຖວາຍ ແດ່ອົງ ພຣະຜູ້ເປັນເຈົ້າ. [23](ຕາມທີ່ຂຽນໄວ້ ແລ້ວ ໃນພຣະບັນຍັດຂອງອົງ
ພຣະຜູ້ເປັນເຈົ້າ ວ່າ, "ລູກຊາຍກົກທຸກຄົນຈະໄດ້ເອີ້ນວ່າເປັນລູກຖວາຍແດ່ອົງ ພຣະຜູ້ເປັນເຈົ້າ.")
[24]ແລະ ເພື່ອຖວາຍຂອງບູຊາຕາມທີ່ຊົງກ່າວໄວ້ແລ້ວໃນພຣະບັນຍັດຂອງອົງ ພຣະຜູ້ເປັນເຈົ້າ ຄື

"ນົກເຂົາຄູ່ໜຶ່ງຫລືນົກກາງແກໜຸ່ມສອງໂຕ."

[25]ນີ້ແຫລະ, ມີຊາຍຄົນໜຶ່ງໃນກຸງເຢຣູຊາເລັມຊື່ຊີເມໂອນ ເປັນຄົນສິນທຳແລະຢຳເກງ
ພຣະເຈົ້າ ເພິ່ນໄດ້ຄອຍຖ້າວັນທີ່ພວກອິສຣາເອນຈະໄດ້ຮັບຄວາມບັນເທົາທຸກແລະພຣະວິນ-
ຍານບໍລິສຸດຊົງສະຖິດຢູ່ກັບເພິ່ນ. [26]ພຣະວິນຍານບໍລິສຸດໄດ້ຊົງສະແດງແກ່ເພິ່ນແລ້ວວ່າ, ເພິ່ນ
ຈະບໍ່ຕາຍຈົນກວ່າຈະໄດ້ເຫັນພຣະຄຣິດຜູ້ມາຈາກອົງພຣະຜູ້ເປັນເຈົ້າ. [27]ຊີເມໂອນໄດ້ເຂົ້າໄປ
ໃນບໍລິເວນພຣະວິຫານໂດຍພຣະວິນຍານບໍລິສຸດຊົງນຳ ແລະເມື່ອບິດາມານດາໄດ້ນຳເອົາ
ພຣະກຸມມານເຢຊູເຂົ້າໄປ ເພື່ອຈະກະທຳແກ່ພຣະກຸມມານຕາມກົດລະບຽບແຫ່ງພຣະບັນຍັດ.
[28]ຊີເມໂອນຈຶ່ງໄດ້ອູ້ມເອົາກຸມມານແລະສັນລະເສີນພຣະເຈົ້າວ່າ.

[29] "ຂ້າແດ່ພຣະອົງເຈົ້າ
ບັດນີ້ພຣະອົງໄດ້ຊົງໃຫ້ຂ້ອຍໃຊ້ຂອງພຣະອົງໄປເປັນສຸກ
ຕາມພຣະທຳຂອງພຣະອົງ.
[30] ເພາະວ່າຕາຂ້າພຣະອົງໄດ້ເຫັນຄວາມພົ້ນ
ທີ່ມາຈາກພຣະອົງແລ້ວ,
[31] ຊຶ່ງພຣະອົງໄດ້ຊົງຈັດຕຽມໄວ້
ຕໍ່ໜ້າໄພ່ພົນທັງຫລາຍ.
[32] ເປັນຄວາມສະຫວ່າງສ່ອງແສງແກ່ບັນດາປະຊາຊາດ
ແລະເປັນສະຫງ່າລາສີແກ່ພວກອິສຣາເອນ
ພົນລະເມືອງຂອງພຣະອົງ."

[33]ຝ່າຍບິດາມານດາຂອງພຣະກຸມມານກໍປະຫລາດໃຈ ດ້ວຍຖ້ອຍຄຳທີ່ຊີເມໂອນໄດ້ກ່າວເຖິງ
ພຣະກຸມມານນັ້ນ. [34]ຊີເມໂອນໄດ້ອວຍພອນແກ່ເຂົາ ແລ້ວກ່າວແກ່ມາຣີອາມານດາພຣະກຸມ-
ມານນັ້ນວ່າ, "ເບິ່ງແມ! ພຣະກຸມມານນີ້ຊົງຕັ້ງໄວ້ເປັນເຫດໃຫ້ຫລາຍຄົນໃນພວກອິສຣາເອນລົ້ມ
ລົງແລະລຸກຂຶ້ນໃໝ່ ແລະເປັນໝາຍສຳຄັນທີ່ເຂົາຈະກ່າວຕໍ່ສູ້. [35]ເພື່ອຄວາມຄຶດໃນໃຈຂອງຄົນ
ຈຳນວນຫລາຍຈະໄດ້ປະກົດແຈ້ງສ່ວນນາງ, ດາບຈະແທງຫົວໃຈຂອງນາງເອງໃຫ້ຊອດ."

[36]ຍັງມີໝໍທຳນວາຍຄົນໜຶ່ງຊື່ອານາ ເປັນລູກຂອງຟານູເອັນໃນເຜົ່າອາເຊ ນາງເປັນຄົນແກ່
ຊະລາຫລາຍແລ້ວ ມີຜົວຕັ້ງແຕ່ເປັນສາວໜຸ່ມ ແລະຢູ່ນຳຜົວໄດ້ເຈັດປີ. [37]ແລ້ວກໍເປັນໝ້າຍຢູ່
ລະຫວ່າງແປດສິບສີ່ປີ ນາງບໍ່ໜີຈາກບໍລິເວນພຣະວິຫານ ແຕ່ໄດ້ຢູ່ປະຕິບັດພຣະເຈົ້າ, ຮັກສາ
ສິນດ້ວຍອົດອາຫານແລະໄຫວ້ວອນທັງກາງເວັນແລະກາງຄືນ. [38]ໃນຂະນະນັ້ນນາງໄດ້ເຂົ້າມາ
ໂມທະນາພຣະຄຸນພຣະເຈົ້າ ແລະກ່າວເຖິງພຣະກຸມມານໃຫ້ຄົນທັງປວງໃນກຸງເຢຣູຊາເລັມຟັງ
ຊຶ່ງເຂົາກຳລັງຄອຍຖ້າການຊົງໄຖ່ໃຫ້ພົ້ນນັ້ນ.

## ການກັບເມືອນາຊາເຣັດ

[39]ຄັນໂຢເຊັບກັບມາຣີອາໄດ້ເຮັດທຸກສິ່ງຕາມພຣະບັນຍັດຂອງພຣະຜູ້ເປັນເຈົ້າແລ້ວກໍໄດ້ກັບ
ເມືອຍັງເມືອງຂອງຕົນ ຄືນາຊາເຣັດແຂວງຄາລິເລ. [40]ພຣະກຸມມານນັ້ນກໍໃຫຍ່ຂຶ້ນແລະແຂງ-
ແຮງ, ເຕັມໄປດ້ວຍສະຕິປັນຍາ, ແລະພຣະຄຸນຂອງພຣະເຈົ້າກໍສະຖິດຢູ່ນຳ.

## ກຸມມານເຢຊູໃນພຣະວິຫານ

41ຝ່າຍບິດາມານດາຂອງພຣະກຸມມານ ເຄີຍຂຶ້ນເມືອກຸງ ເຢຣູຊາເລັມ ໃນເທດສະການປັດສະ-
ຄາ ທຸກປີ. 42ເມື່ອກຸມມານມີພຣະຊົນສິບສອງພັນສາ ເຂົາກໍຂຶ້ນເມືອຕາມທຳນຽມເທດສະການ
ນັ້ນ. 43ເມື່ອຄົບກຳນົດວັນປັດສະຄານັ້ນແລ້ວ ຂະນະທີ່ເຂົາກຳລັງກັບເມືອ ພຣະກຸມມານ ເຢຊູກໍ
ຍັງຄ້າງຢູ່ໃນກຸງ ເຢຣູຊາເລັມ ຝ່າຍບິດາມານດາກໍບໍ່ຮູ້ຈັກ. 44ເພາະເຂົາທັງສອງຄຶດວ່າພຣະກຸມ-
ມານນັ້ນຢູ່ນຳຄົນທີ່ມາດ້ວຍກັນ ເຂົາຈຶ່ງເດີນທາງໄປໄດ້ມື້ໜຶ່ງ ຈຶ່ງຕັ້ງຊອກຫາກຸມມານໃນໝູ່ພີ່-
ນ້ອງ ແລະຄົນທີ່ຮູ້ຈັກກັນ. 45ເມື່ອບໍ່ພົບຈຶ່ງກັບຄືນໄປຊອກຫາທີ່ກຸງ ເຢຣູຊາເລັມ. 46ຄັນຊອກຫາ
ໄດ້ສາມວັນແລ້ວ ຈຶ່ງພົບພຣະກຸມມານນັ່ງຢູ່ໃນບໍລິເວນພຣະວິຫານຖ້າມກາງພວກອາຈານ ກຳ-
ລັງຟັງ ແລະໄຕ່ຖາມພວກອາຈານ ເຫລົ່ານັ້ນຢູ່. 47ຄົນທັງປວງທີ່ໄດ້ຍິນກໍປະຫລາດໃຈໃນສະຕິ-
ປັນຍາແລະຄຳຕອບຂອງພຣະກຸມມານນັ້ນ. 48ຝ່າຍບິດາມານດາ ເມື່ອໄດ້ເຫັນແລ້ວກໍອັດສະຈັນ
ໃຈ ມານດາຈຶ່ງກ່າວວ່າ, “ລູກເອີຍ, ເປັນຫຍັງເຈົ້າຈຶ່ງເຮັດຢ່າງນີ້ແກ່ເຮົາ ເບິ່ງແມ! ພໍ່ກັບແມ່ໄດ້
ຊອກຫາ ເຈົ້າເປັນທຸກໃຈຫລາຍ.” 49ຝ່າຍພຣະກຸມມານກໍຕອບວ່າ, “ເຈົ້າທັງສອງຊອກຫາເຮົາ
ເຮັດຫຍັງ ຍັງບໍ່ຮູ້ຫລືວ່າເຮົາຕ້ອງຢູ່ໃນທີ່ສະຖິດແຫ່ງ ພຣະບິດາຂອງເຮົາ.”[ກ] 50ແຕ່ບິດາມານ
ດາກໍບໍ່ໄດ້ເຂົ້າໃຈຄຳຕອບຂອງພຣະກຸມມານນັ້ນ. 51ແລ້ວພຣະກຸມມານກໍລົງໄປກັບເຂົາ ໄປຍັງ
ເມືອງ ນາຊາເຣັດ ແລະຍອມຢູ່ໃຕ້ບັງຄັບບັນຊາຂອງເຂົາ ສ່ວນມານດາກໍເກັບຂໍ້ຄວາມທັງຫລາຍ
ນີ້ໄວ້ໃນໃຈ.

52ພຣະເຢຊູກໍໄດ້ຈະເລີນຂຶ້ນໃນດ້ານສະຕິປັນຍາ, ໃນດ້ານຮ່າງກາຍ, ເປັນທີ່ຊອບຕໍ່ພຣະ-
ເຈົ້າ ແລະຕໍ່ມະນຸດເໝືອນກັນ.

# ບົດທີ 3

## ການປະກາດຂອງໂຢຮັນບັບຕິສະໂຕ

*(ມທ 3:1-12; ມຣກ 1:1-8; ຢຮ 1:19-28)*

1ເມື່ອປີທີສິບຫ້າໃນລັດຊະການ ກາຍຊາ ຕິເບຣິໂອ ຄາວເມື່ອ ປົນຕິໂອ ປີລາດ ເປັນຜູ້ຄຸ້ມຄອງ
ແຂວງ ຢູດາຍ, ເຮໂຣດ ເປັນຜູ້ຄຸ້ມຄອງ ແຂວງ ຄາລີເລ, ຟີລິບ ນ້ອງຊາຍຂອງ ເຮໂຣດ ເປັນຜູ້ຄຸ້ມ
ຄອງ ແຂວງ ອີຕູຣາຍ ກັບ ອານາເຂດ ທາໂຄນິດ, ລີຊາເນຍ ເປັນຜູ້ຄຸ້ມຄອງ ແຂວງ ອາບີເລັນ.
2ແລະ ອັນນາ ກັບ ກາຢະຟາ ເປັນມະຫາປະໂລຫິດ ຄາວນັ້ນພຣະທຳຂອງ ພຣະເຈົ້າ ໄດ້ມາເຖິງ
ໂຢຮັນ ບຸດຊາຂາຣີຢາ ໃນກາງປ່າ. 3ແລ້ວ ໂຢຮັນ ໄດ້ໄປທົ່ວເຂດອ້ອມແອ້ມແມ່ນ້ຳຢໍແດນ ປະ-
ກາດບັບຕິສະມາກ່ຽວກັບການຖິ້ມໃຈ ເກົ່າເອົາໃຈໃໝ່ ເພື່ອ ພຣະເຈົ້າ ຈະຊົງຍົກຄວາມຜິດບາບ
ເສຍ.

4ຕາມທີ່ຂຽນໄວ້ແລ້ວໃນໜັງສືຖ້ອຍຄຳຂອງ ເອຊາຢາ ຜູ້ປະກາດພຣະທຳວ່າ,

“ສຽງຜູ້ທີ່ຮ້ອງໃນປ່າວ່າ
‘ຈົ່ງຈັດແຈງທາງຂອງອົງ ພຣະຜູ້ເປັນເຈົ້າ

---

[ກ]ຫລື “ຕ້ອງເຮັດທຸລະກິດແຫ່ງພຣະບິດາຂອງເຮົາ.”

ຈົ່ງເຮັດຫົນທາງຂອງພຣະອົງໃຫ້ຊື່ໄປ.
5 ຮ່ອມທຸກຮ່ອມຈະໄດ້ຖົມໃຫ້ເຕັມ
ພູແລະໂນນທຸກໜ່ວຍຈະເຮັດໃຫ້ຕ່ຳລົງ
ທາງຄົດຈະເຮັດໃຫ້ຊື່
ແລະທາງມີຕໍາກໍຈະເຮັດໃຫ້ກ້ຽງ.
6 ມະນຸດທັງປວງຈະໄດ້ເຫັນການທີ່ ພຣະເຈົ້າ ຊົງໂຜດໃຫ້ພົ້ນ’.”

7ໂຢຮັນ ຈຶ່ງກ່າວ ແກ່ປະຊາຊົນທີ່ອອກມາຮັບບັບຕິສະມາຈາກຕົນວ່າ, “ອ້າຍຊາດງູຮ້າຍເອີຍ,
ໃຜໄດ້ບອກສູໃຫ້ປົບໜີຈາກພຣະພິໂລດທີ່ຈະມາເຖິງນັ້ນ. 8ເຫດສັນນັ້ນ, ຈົ່ງປະຕິບັດໃຫ້ໄດ້ຜົນ
ສົມກັບການຖິ້ມໃຈເກົ່າເອົາໃຈໃໝ່ ແລະຢ່າຕັ້ງນຶກໃນໃຈວ່າ ‘ພວກເຮົາມີອັບຣາຮາມ ເປັນພໍ່ເຖົ້າ’
ເພາະ ເຮົາບອກ ເຈົ້າທັງຫລາຍວ່າ ພຣະເຈົ້າ ຊົງລິດອາດຈະບັນດານ ໃຫ້ລູກຫລານ ເກີດ ແກ່ ອັບ-
ຣາຮາມ ຈາກກ້ອນຫີນ ເຫລົ່ານີ້ກໍໄດ້. 9ບັດນີ້ຂວານວາງໄວ້ທີ່ເຫງົ້າຕົ້ນໄມ້ແລ້ວ ສັນນັ້ນໄມ້ທຸກຕົ້ນ
ທີ່ບໍ່ເກີດຜົນດີກໍຈະຖືກປ້ຳແລ້ວໂຍນຖິ້ມໃສ່ໄຟເສຍ.”

10ຝ່າຍປະຊາຊົນຈຶ່ງຖາມ ໂຢຮັນ ວ່າ, “ຖ້າດັ່ງນັ້ນພວກເຮົາເຮັດແນວໃດ.” 11ເພິ່ນໄດ້ຕອບເຂົາ
ວ່າ, “ຜູ້ໃດທີ່ມີເສື້ອສອງໂຕຈົ່ງປັນໃຫ້ຜູ້ບໍ່ມີແລະຜູ້ທີ່ມີອາຫານຈົ່ງປັນໃຫ້ເໝືອນກັນ.” 12ແລະ
ພວກເກັບພາສີ ກໍໄດ້ມາຮັບບັບຕິສະມາເໝືອນກັນ ແລ້ວຖາມເພິ່ນວ່າ, “ອາຈານເອີຍ, ພວກ
ຂ້ານ້ອຍຄວນຈະເຮັດຢ່າງໃດ.” 13ເພິ່ນຈຶ່ງຕອບເຂົາວ່າ, “ຢ່າໄດ້ເກັບພາສີເກີນອັດຕາ.” 14ພວກ
ທະຫານກໍຖາມເພິ່ນເໝືອນກັນວ່າ, “ພວກຂ້ານ້ອຍເດ, ຈະເຮັດແນວໃດ?” ເພິ່ນຈຶ່ງຕອບເຂົາວ່າ,
“ຢ່າຂົ່ມເຫງຫລືຢ່າຫາຄວາມບໍ່ຈິງໃສ່ໃຜເພື່ອເອົາເງິນ ແຕ່ຈົ່ງພໍໃຈໃນຄ່າຈ້າງຂອງຕົນ.”

15ເມື່ອພົນລະເມືອງຫວັງຖ້າ ພຣະຄຣິດ ຢູ່ ເຂົາທຸກຄົນກໍຄຶດໄຕ່ຕອງເຖິງ ໂຢຮັນ ວ່າ, “ຜູ້ນີ້ອາດ
ຈະແມ່ນ ພຣະຄຣິດ ຫລື.” 16ໂຢຮັນ ຈຶ່ງຕອບເຂົາວ່າ, “ຝ່າຍເຮົາ, ເຮົາໃຫ້ເຈົ້າທັງຫລາຍຮັບບັບຕິ-
ສະມາດ້ວຍນ້ຳ ແຕ່ມີທ່ານຜູ້ໜຶ່ງຈະມາເປັນຜູ້ມີລິດກວ່າເຮົາອີກ ຊຶ່ງເຮົາບໍ່ສົມຄວນຈະແກ້ສາຍ-
ຮັດ ເກີບ ຂອງ ເພິ່ນ ຝ່າຍ ເພິ່ນ ຈະ ໃຫ້ພວກ ເຈົ້າ ຮັບ ບັບຕິສະມາ ດ້ວຍ ພຣະວິນຍານບໍລິສຸດ ແລະ
ດ້ວຍໄຟ. 17ມືຂອງທ່ານຖືດົ້ງຝັດເຂົ້າ ເພື່ອຈະເຮັດລານເຂົ້າຂອງຕົນໃຫ້ກ້ຽງດີແລະເພື່ອຮວບ-
ຮວມເຂົ້າເມັດດີໃສ່ໄວ້ໃນເລົ້າຂອງຕົນ ແຕ່ເຂົ້າລີບນັ້ນເພິ່ນຈະເຜົາເສຍດ້ວຍໄຟທີ່ບໍ່ຮູ້ມອດ.”

18ດ້ວຍ ເຫດ ນີ້ ໂຢຮັນ ຈຶ່ງ ປະກາດ ຂ່າວ ປະເສີດ ແກ່ ພົນລະເມືອງ ດ້ວຍ ຄຳເຕືອນ ສະຕິ ຕ່າງໆ
ຫລາຍຂໍ້. 19ຝ່າຍ ເຮໂຣດ ຜູ້ປົກຄອງ ເມືອງ, ເມື່ອຖືກ ໂຢຮັນ ກ່າວຕິຕຽນ ເພາະ ເລື່ອງນາງ ເຮໂຣ-
ເດຍ ພັນລະຍານ້ອງຊາຍຂອງຕົນ ແລະ ເພາະການຊົ່ວທັງຫລາຍທີ່ ເຮໂຣດ ໄດ້ເຮັດນັ້ນ. 20ເຮ-
ໂຣດ ຍັງເຮັດການຊົ່ວນີ້ເພີ່ມກັບການທີ່ຕົນໄດ້ເຮັດມາແລ້ວ ຄືໄດ້ຈັບ ໂຢຮັນ ຂັງໄວ້ໃນຄຸກ.

## ພຣະເຢຊູຊົງຮັບບັບຕິສະມາ

*(ມທ 3:13-17; ມຣກ 1:9-11)*

21ຢູ່ມາ ເມື່ອຄົນທັງປວງ ໄດ້ຮັບບັບຕິສະມາ ແລະ ພຣະເຢຊູ ກໍຊົງຮັບບັບຕິສະມາ ເໝືອນກັນ
ຂະນະ ເມື່ອພຣະອົງຊົງ ໄຫວ້ວອນຢູ່ ທ້ອງຟ້າກໍໄຂອອກ. 22ແລະ ພຣະວິນຍານບໍລິສຸດ ຊົງຮູບ
ເໝືອນນົກເຂົາ ໄດ້ສະເດັດລົງມາສະຖິດຢູ່ ເທິງພຣະອົງ ແລະມີພຣະສຸລະສຽງອອກມາຈາກຟ້າ

ສະຫວັນວ່າ, "ທ່ານເອີຍ, ທ່ານເປັນບຸດທີ່ຮັກ[ກ] ຂອງເຮົາ ເຮົາຊອບໃຈຫລາຍໃນທ່ານ."

## ລຳດັບວົງຂອງພຣະເຢຊູຄຣິດ

*(ມທ 1:1-17)*

23ເມື່ອ ພຣະເຢຊູ ຊົງຕັ້ງຕົ້ນປະຕິບັດໜ້າທີ່ ພຣະອົງມີພຣະຊົນມາຍຸປະມານສາມສິບພັນສາ
(ຕາມຄວາມຄາດໝາຍຂອງຄົນທັງຫລາຍເຂົ້າໃຈວ່າ) ເປັນບຸດຂອງ ໂຢເຊັບ ຊຶ່ງເປັນບຸດຂອງ
ເອລີ. 24ເອລີ ເປັນບຸດຂອງ ມັດທາດ, ມັດທາດ ເປັນບຸດຂອງ ເລວີ, ເລວີ ເປັນບຸດຂອງ ເມລະຂີ,
ເມລະຂີ ເປັນບຸດຂອງ ຢັນນາ, ຢັນນາ ເປັນບຸດຂອງ ໂຢເຊັບ. 25ໂຢເຊັບ ເປັນບຸດຂອງ ມັດຕາ-
ເທຍ, ມັດຕາເທຍ ເປັນບຸດຂອງ ອາໂມດ, ອາໂມດ ເປັນບຸດຂອງ ນາຮູມ, ນາຮູມ ເປັນບຸດຂອງ
ເອຊະລີ, ເອຊະລີ ເປັນບຸດຂອງ ນັກກາຍ. 26ນັກກາຍ ເປັນບຸດຂອງ ມາອາດ, ມາອາດ ເປັນບຸດ
ຂອງ ມັດຕາເທຍ, ມັດຕາເທຍ ເປັນບຸດຂອງ ເຊເມອີນ, ເຊເມອີນ ເປັນບຸດຂອງ ໂຢເຊັກ, ໂຢເຊັກ
ເປັນບຸດຂອງ ໂຢດາ. 27ໂຢດາ ເປັນບຸດຂອງ ໂຢຮານັນ, ໂຢຮານັນ ເປັນບຸດຂອງ ເຣຊາ, ເຣຊາ
ເປັນບຸດຂອງ ເຊຣູບາເບນ, ເຊຣູບາເບນ ເປັນບຸດຂອງ ເຊອານຕີເອນ, ເຊອານຕີເອນ ເປັນບຸດ
ຂອງ ເນຣີ. 28ເນຣີ ເປັນບຸດຂອງ ເມລະຂີ, ເມລະຂີ ເປັນບຸດຂອງ ອັດດີ, ອັດດີ ເປັນບຸດຂອງ ໂກ-
ຊາມ, ໂກຊາມ ເປັນບຸດຂອງ ເອນມາດາມ, ເອັນມາດາມເປັນບຸດຂອງ ເອຣະ. 29ເອຣະ ເປັນບຸດ
ຂອງ ເຢຊູ, ເຢຊູ ເປັນບຸດຂອງ ເອລີເອເຊ, ເອລີເອເຊ ເປັນບຸດຂອງ ໂຢຣິມ, ໂຢຣິມ ເປັນບຸດຂອງ
ມັດທາດ, ມັດທາດ ເປັນບຸດຂອງ ເລວີ. 30ເລວີ ເປັນບຸດຂອງຊີມໂອນ, ຊີມໂອນ ເປັນບຸດຂອງຢູ-
ດາ, ຢູດາ ເປັນບຸດຂອງ ໂຢເຊັບ, ໂຢເຊັບ ເປັນບຸດຂອງ ໂຢນາມ, ໂຢນາມ ເປັນບຸດຂອງ ເອລີຢາ-
ກີມ. 31ເອລີຢາກີມ ເປັນບຸດຂອງ ເມເລອາ, ເມເລອາ ເປັນບຸດຂອງ ເມັນນາ, ເມັນນາ ເປັນບຸດ
ຂອງ ມັດຕາທາ, ມັດຕາທາ ເປັນບຸດຂອງ ນາທານ, ນາທານ ເປັນບຸດຂອງ ດາວິດ. 32ດາວິດ
ເປັນບຸດຂອງ ເຢຊີ, ເຢຊີ ເປັນບຸດຂອງ ໂອເບັດ, ໂອເບັດ ເປັນບຸດຂອງ ໂບອາດ, ໂບອາດ ເປັນບຸດ
ຂອງຊາລາ, ຊາລາເປັນບຸດຂອງ ນາໂຊນ. 33ນາໂຊນ ເປັນບຸດຂອງ ອຳມີນາດາບ, ອຳມີນາດາບ
ເປັນບຸດຂອງ ອັດມິນ, ອັດມິນ ເປັນບຸດຂອງ ອານີ, ອານີ ເປັນບຸດຂອງ ເຣດຊະໂຣນ, ເຣດຊະ-
ໂຣນ ເປັນບຸດຂອງ ເປເຣັດ, ເປເຣັດ ເປັນບຸດຂອງ ຢູດາ. 34ຢູດາ ເປັນບຸດຂອງ ຢາໂຄບ, ຢາໂຄບ
ເປັນບຸດຂອງ ອີຊາກ, ອີຊາກ ເປັນບຸດຂອງ ອັບຣາຮາມ, ອັບຣາຮາມ ເປັນບຸດຂອງ ເຕຣາ, ເຕຣາ
ເປັນບຸດຂອງ ນາໂຮ. 35ນາໂຮ ເປັນບຸດຂອງ ເສຣຸກ, ເສຣຸກ ເປັນບຸດຂອງ ເຣອູ, ເຣອູ ເປັນບຸດ
ຂອງ ເປເລັກ, ເປເລັກ ເປັນບຸດຂອງ ເຣເບ, ເຣເບ ເປັນບຸດຂອງ ເຊລາ. 36ເຊລາ ເປັນບຸດຂອງ
ກາຍນານ, ກາຍນານ ເປັນບຸດຂອງ ອາຟັກຊາດ, ອາຟັກຊາດ ເປັນບຸດຂອງ ເຊມ, ເຊມ ເປັນບຸດ
ຂອງ ໂນອາ, ໂນອາ ເປັນບຸດຂອງ ລາເມັກ. 37ລາເມັກ ເປັນບຸດຂອງ ເມທູເຊລາ, ເມທູເຊລາ ເປັນ
ບຸດຂອງ ເອໂນກ, ເອໂນກ ເປັນບຸດຂອງຢາເຣັດ, ຢາເຣັດ ເປັນບຸດຂອງ ມາຮາລາເລນ, ມາຮາ-
ລາເລນ ເປັນບຸດຂອງ ກາຍນານ. 38ກາຍນານ ເປັນບຸດຂອງ ເອໂນດ, ເອໂນດ ເປັນບຸດຂອງ
ເຊດ, ເຊດ ເປັນບຸດຂອງ ອາດາມ, ອາດາມ ເປັນບຸດ ພຣະເຈົ້າ.

[ກ]ຫລື "ບຸດອົງດຽວ"

# ບົດທີ 4

## ມານທົດລອງພຣະເຢຊູ

*(ມທ 4:1-11; ມຣກ 1:12-13)*

[1]ພຣະເຢຊູ ຊົງ ເຕັມ ໄປດ້ວຍ ພຣະວິນຍານບໍລິສຸດ ໄດ້ສະເດັດກັບ ຈາກ ແມ່ນໍ້າ ຢໍແດນ ແລະ
ພຣະວິນຍານ ໄດ້ຊົງນໍາພຣະອົງໄປໃນປ່າ. [2]ພະຍາມານໄດ້ທົດລອງພຣະອົງເປັນເວລາສີ່ສິບວັນ
ໃນວັນເຫລົ່ານັ້ນພຣະອົງບໍ່ໄດ້ຊົງສະເຫວີຍອາຫານສິ່ງໃດ ແລະເມື່ອສິ້ນສີ່ສິບວັນແລ້ວ ພຣະອົງ
ຊົງຢາກອາຫານ. [3]ພະຍານມານໄດ້ທູນພຣະອົງວ່າ, "ຖ້າທ່ານເປັນ ພຣະບຸດ ຂອງ ພຣະເຈົ້າ ຈົ່ງ
ສັ່ງຫີນກ້ອນນີ້ໃຫ້ກາຍເປັນອາຫານເບິ່ງດູ!" [4]ພຣະເຢຊູຊົງຕອບມັນວ່າ, "ມີພຣະຄໍາພີຂຽນໄວ້ວ່າ
'ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວ'."
[5]ແລ້ວມານ ໄດ້ນໍາພຣະອົງຂຶ້ນ ເມືອສະແດງບັນດາລາຊະ ແຜ່ນດິນທົ່ວພິພົບ ໃນບັດດຽວຊີ້ໃຫ້
ພຣະອົງ ເຫັນ. [6]ແລະມານໄດ້ທູນພຣະອົງວ່າ, "ອໍານາດທັງໝົດນີ້ ສະຫງ່າລາສີຂອງລາຊະ
ແຜ່ນດິນນັ້ນ ເຮົາຈະຍົກໃຫ້ທ່ານ ເພາະວ່າຊົງມອບເປັນສິດໄວ້ແກ່ເຮົາແລ້ວ ແລະເຮົາປາດຖະ-
ໜາຈະໃຫ້ແກ່ຜູ້ໃດກໍໃຫ້ແກ່ຜູ້ນັ້ນ. [7]ເຫດສັນນີ້ຖ້າທ່ານຂາບລົງໄຫວ້ເຮົາ ສັບພະສິ່ງນັ້ນຈະເປັນ
ຂອງທ່ານໝົດ." [8]ຝ່າຍ ພຣະເຢຊູ ຊົງຕອບມານວ່າ, "ມີຄໍາຂຽນໄວ້ໃນພຣະຄໍາພີວ່າ, 'ຈົ່ງຂາບ
ໄຫວ້ພຣະອົງຜູ້ເປັນເຈົ້າຂອງເຈົ້າແລະປະຕິບັດພຣະອົງແຕ່ຜູ້ດຽວ'."
[9]ແລ້ວພະຍາມານໄດ້ນໍາພຣະອົງ ໄປຍັງກຸງ ເຢຣູຊາເລັມ ໃຫ້ພຣະອົງປະທັບຢູ່ເທິງຫລັງຄາ
ພຣະວິຫານ ແລະທູນພຣະອົງວ່າ, "ຖ້າທ່ານເປັນ ພຣະບຸດ ຂອງ ພຣະເຈົ້າ ຈົ່ງ ໂຕນລົງຈາກທີ່ນີ້
ເບິ່ງດູ! [10]ເພາະວ່າມີຄໍາຂຽນໄວ້ໃນພຣະຄໍາພີວ່າ, 'ພຣະເຈົ້າ ຈະຊົງຮັບສັ່ງພວກເທວະດາຂອງ
ພຣະອົງກ່ຽວກັບ ເລື່ອງທ່ານ ເພື່ອໃຫ້ເຂົາ ເອົາໃຈໃສ່ຮັກສາທ່ານໄວ້'. [11]ແລະ, 'ມືຂອງເທວະດາ
ເຫລົ່ານັ້ນຈະຮັບທ່ານໄວ້ຢ້ານວ່າຕີນຂອງທ່ານຈະຕໍາຫີນ'." [12]ພຣະເຢຊູຊົງຕອບມານວ່າ, "ມີຄໍາ
ກ່າວໄວ້ວ່າ, 'ຢ່າໄດ້ລອງໃຈ ພຣະຜູ້ເປັນເຈົ້າ ຂອງເຈົ້າ'." [13]ເມື່ອມານໄດ້ທົດລອງພຣະອົງທຸກ
ປະການແລ້ວ ມັນກໍໜີຈາກພຣະອົງໄປຈົນເຖິງເວລາທີ່ມີໂອກາດອີກ.

## ພຣະເຢຊູຊົງຕັ້ງຕົ້ນເທດສະໜາໃນແຂວງຄາລິເລ

*(ມທ 4:12-17; ມຣກ 1:14-15)*

[14]ແລ້ວ ພຣະເຢຊູ ໄດ້ສະເດັດກັບຄືນແຂວງ ຄາລິເລ ດ້ວຍລິດແຫ່ງ ພຣະວິນຍານ ແລະກິຕິສັບ
ຂອງພຣະອົງ ໄດ້ຊ່າລືໄປທົ່ວອ້ອມເຂດນັ້ນ. [15]ພຣະອົງຊົງສັ່ງສອນໃນ ໂຮງທໍາມະ ເທດສະໜາ
ຂອງເຂົາ ແລະໄດ້ຊົງຮັບຄວາມສັນລະເສີນຈາກຄົນທັງປວງ.

## ໄທນາຊາເຣັດບໍ່ຕ້ອນຮັບພຣະເຢຊູ

*(ມທ 13:53-58; ມຣກ 6:1-6)*

[16]ແລະພຣະອົງ ໄດ້ສະເດັດມາຍັງ ເມືອງ ນາຊາເຣັດ ຄືບ່ອນທີ່ພຣະອົງຊົງ ຈະເລີນ ໃຫຍ່ຂຶ້ນ
ແລ້ວພຣະອົງໄດ້ສະເດັດເຂົ້າໄປໃນໂຮງທໍາໃນວັນຊະບາໂຕ ຕາມເຄີຍ ແລະຊົງຢືນຂຶ້ນເພື່ອຈະ
ອ່ານ ພຣະທໍາໃຫ້ທີ່ປະຊຸມຟັງ. [17]ແລ້ວເຂົາໄດ້ຍື່ນພຣະຄໍາພີຂອງ ເອຊາຢາ ຜູ້ປະກາດພຣະທໍາ
ໃຫ້ແກ່ພຣະອົງ ເມື່ອຊົງພີພັງສືພຣະທໍາອອກກໍພົບຂໍ້ທີ່ຂຽນໄວ້ວ່າ,

18 “ພຣະວິນຍານ ແຫ່ງອົງ ພຣະຜູ້ເປັນເຈົ້າ ຊົງສະຖິດຢູ່ເທິງຂ້າພະເຈົ້າ
ເພາະວ່າພຣະອົງໄດ້ທົດສົງຕັ້ງຂ້າພະເຈົ້າໄວ້
ໃຫ້ປະກາດຂ່າວປະເສີດແກ່ຄົນຍາກຈົນ.
ພຣະອົງໄດ້ຊົງໃຊ້ຂ້າພະເຈົ້າປະກາດອິດສະຫລະພາບແກ່ບັນດາຊະເລີຍ
ໃຫ້ປະກາດແກ່ຄົນຕາບອດວ່າຈະໄດ້ເຫັນຮຸ່ງອີກ
ໃຫ້ປ່ອຍຜູ້ຖືກບີບບັງຄັບເປັນອິດສະຫລະ.
19 ແລະໃຫ້ປະກາດປີທີ່ອົງ ພຣະຜູ້ເປັນເຈົ້າ ຈະຊົງ ເມດຕານັ້ນ.”

20ແລ້ວພຣະອົງຊົງຮ້ຳໜັງສືນັ້ນສົ່ງຄືນໃຫ້ເຈົ້າໜ້າທີ່ ແລະຊົງນັ່ງລົງ ຕາຂອງຄົນທັງປວງໃນ
ໂຮງທຳກໍເພ່ງເບິ່ງພຣະອົງ. 21ພຣະອົງຈຶ່ງຊົງຕັ້ງຕົ້ນກ່າວກັບເຂົາວ່າ, “ພຣະຄຳພີຕອນນີ້ກໍສຳ-
ເລັດໃນວັນນີ້ ຄືເມື່ອຫູຂອງທ່ານກຳລັງໄດ້ຍິນຢູ່ນີ້.” 22ຄົນທັງປວງກໍກ່າວຊົມເຊີຍພຣະອົງ ແລະ
ປະຫລາດໃຈໃນຖ້ອຍຄຳອ່ອນຫວານຊຶ່ງອອກມາຈາກພຣະໂອດຂອງພຣະອົງ ເຂົາຈຶ່ງເວົ້າກັນ
ວ່າ, “ຄົນຜູ້ນີ້ເປັນລູກໂຢເຊັບບໍ່ແມ່ນຫລື?”. 23ພຣະອົງຊົງກ່າວແກ່ເຂົາວ່າ, “ທ່ານທັງຫລາຍຄົງ
ຈະກ່າວຄຳສຸພາສິດຂໍ້ນີ້ຕໍ່ເຮົາເປັນແນ່ ຄືວ່າ ‘ນາຍໝໍເອີຍ, ຈົ່ງປົວຕົວເອງໃຫ້ດີ’ ຄື ‘ບັນດາ
ການຊຶ່ງພວກເຮົາໄດ້ຍິນວ່າ ທ່ານໄດ້ກະທຳໃນເມືອງ ກາເປນາອູມ ຈົ່ງເຮັດໃນເມືອງຂອງຕົນທີ່
ນີ້ເໝືອນກັນ.’” 24ພຣະອົງຊົງກ່າວອີກວ່າ, “ເຮົາບອກພວກທ່ານຕາມຄວາມຈິງວ່າ ບໍ່ມີຜູ້ປະ-
ກາດພຣະທຳຄົນໃດໄດ້ຮັບຄວາມນັບຖືໃນບ້ານເມືອງຂອງຕົນ. 25ແຕ່ເຮົາບອກພວກທ່ານຕາມ
ຄວາມຈິງວ່າ ມີແມ່ໝ້າຍຫລາຍຄົນໃນພວກ ອິສຣາເອນ ໃນຄາວ ເອລີຢາ ເມື່ອຊົງອັດທ້ອງຟ້າ
ເສຍເຖິງສາມປີກັບຫົກເດືອນ ກໍເກີດການອຶດຢາກໜັກຫລາຍທົ່ວແຜ່ນດິນ. 26ແຕ່ ເອລີຢາ ກໍບໍ່
ໄດ້ຮັບໃຊ້ໃຫ້ໄປຫາແມ່ໝ້າຍຄົນໃດ ເວັ້ນແຕ່ແມ່ໝ້າຍຄົນໜຶ່ງໃນເມືອງ ຊາເຣຟັດ ແຂວງ ຊີໂດນ.
27ແລະໃນຄາວຂອງ ເອລີຊາ ຜູ້ປະກາດພຣະທຳ ໄດ້ມີຄົນຂີ້ທູດຫລາຍຄົນໃນພວກ ອິສຣາເອນ
ແຕ່ບໍ່ມີຄົນໃດໄດ້ຮັບການຊົງຊຳລະໃຫ້ດີສະອາດ ເວັ້ນແຕ່ ນາອາມານ ຊາວ ຊີເຣຍ.” 28ເມື່ອຄົນ
ທັງປວງໃນໂຮງທຳໄດ້ຍິນຄຳດັ່ງນັ້ນກໍເຕັມໄປດ້ວຍຄວາມຄຽດ. 29ເຂົາຈຶ່ງພາກັນລຸກຂຶ້ນຊຸກ
ພຣະອົງອອກຈາກເມືອງ ແລະນຳພຣະອົງໄປຍັງແງ່ຜາຊັນບ່ອນໂນນເມືອງເຂົາຕັ້ງຢູ່ນັ້ນ ເພື່ອ
ໝາຍຈະຊຸກພຣະອົງລົງ. 30ແຕ່ພຣະອົງຊົງຍ່າງຜ່ານຖ້າມກາງເຂົາພົ້ນໄປ.

## ຊາຍທີ່ມີຜີຮ້າຍສິງ

*(ມຣກ 1:21-28)*

31ພຣະອົງໄດ້ສະເດັດລົງໄປເຖິງເມືອງ ກາເປນາອູມ ແຂວງ ຄາລີເລ ແລະໄດ້ຊົງສັ່ງສອນເຂົາ
ທັງຫລາຍໃນວັນຊະບາໂຕ. 32ເຂົາກໍປະຫລາດໃຈດ້ວຍການສັ່ງສອນຂອງພຣະອົງ ເພາະຖ້ອຍ
ຄຳຂອງພຣະອົງປະກອບດ້ວຍອຳນາດ.

33ໃນໂຮງທຳມະເທດສະໜານັ້ນມີຄົນໜຶ່ງມີຜີຖ່ອຍຮ້າຍເຂົ້າສິງຢູ່ແລະໄດ້ຮ້ອງສຽງດັງວ່າ.
34“ເຢຊູໄທນາຊາເຣັດເອີຍ, ທ່ານມາຫຍຸ້ງກ່ຽວກັບພວກເຮົາເຮັດຫຍັງ ທ່ານມາທຳລາຍພວກເຮົາ
ຫລື ທ່ານແມ່ນຜູ້ໃດພວກເຮົາກໍຮູ້ແລ້ວ ທ່ານຄືຜູ້ບໍລິສຸດຂອງພຣະເຈົ້າ.” 35ພຣະເຢຊູຊົງຫ້າມ
ມັນວ່າ, “ມິດແມ ອອກຈາກຄົນນີ້ເສຍ!’ ແລະເມື່ອຜີໄດ້ເຮັດໃຫ້ຄົນນັ້ນລົ້ມລົງຖ້າມກາງປະຊາ-

ຊົນແລ້ວ ກໍອອກມາໂດຍບໍ່ໄດ້ເຮັດອັນຕະລາຍແກ່ຄົນນັ້ນແຕ່ຢ່າງໃດ. [36]ຄົນທັງປວງກໍປະ-
ຫລາດໃຈຈຶ່ງເວົ້າກັນວ່າ, "ຄຳເວົ້ານີ້ເປັນຢ່າງໃດໜໍເພາະວ່າເພິ່ນໄດ້ສັ່ງຜີຖ່ອຍຮ້າຍດ້ວຍອຳນາດ
ແລະລິດເດດ ມັນກໍອອກມາ." [37]ແລະກິຕິສັບຂອງພຣະອົງໄດ້ຊ່າລືໄປທຸກບ່ອນທົ່ວຂົງເຂດນັ້ນ.

## ຊົງໂຜດແມ່ເມຍຂອງເປໂຕໃຫ້ດີໄຂ້

*(ມທ 8:14-17; ມຣກ 1:29-34)*

[38]ຝ່າຍພຣະອົງຊົງລຸກຂຶ້ນອອກຈາກໂຮງທຳສະເດັດເຂົ້າໄປໃນເຮືອນຂອງຊີໂມນ ແລະແມ່
ເມຍຂອງຊີໂມນລຳບາກເປັນໄຂ້ແຮງຫລາຍ ເຂົາໄດ້ອ້ອນວອນພຣະອົງສຳລັບຍິງນັ້ນ. [39]ພຣະ-
ອົງຊົງຢືນຢູ່ຂ້າງຄົນເຈັບ ຊົງຫ້າມໄຂ້ ແລະໄຂ້ກໍເຊົາ ໃນທັນໃດນັ້ນນາງກໍລຸກຂຶ້ນບົວລະບັດ
ພຣະອົງກັບທັງພວກຂອງພຣະອົງ.

[40]ເມື່ອເວລາຕາເວັນກຳລັງຕົກ ຜູ້ໃດມີຄົນເຈັບເປັນພະຍາດຕ່າງໆ ກໍພາມາຫາພຣະອົງ
ພຣະອົງກໍຊົງວາງພຣະຫັດໃສ່ເຂົາທຸກຄົນ ໂຜດໃຫ້ເຂົາດີ. [41]ຜີກໍໄດ້ອອກມາຈາກຄົນຫລາຍຄົນ
ເໝືອນກັນ ໂດຍຮ້ອງວ່າ, "ທ່ານເປັນພຣະບຸດຂອງພຣະເຈົ້າ" ແຕ່ພຣະອົງຊົງຫ້າມບໍ່ໃຫ້ເຂົາ
ປາກ ເພາະເຂົາຮູ້ແລ້ວວ່າພຣະອົງຊົງເປັນພຣະຄຣິດ.

## ພຣະເຢຊູຊົງອອກໄປປະກາດ

*(ມຣກ 1:35-39)*

[42]ຄັນຮຸ່ງເຊົ້າພຣະອົງສະເດັດອອກໄປຍັງປ່າບ່ອນສະຫງັດ ປະຊາຊົນກໍຊອກຫາພຣະອົງ
ເມື່ອພົບແລ້ວກໍໜ່ວງໜ່ຽວພຣະອົງໄວ້ບໍ່ໃຫ້ໄປຈາກເຂົາ. [43]ແຕ່ພຣະອົງຊົງກ່າວແກ່ເຂົາວ່າ,
"ເຮົາຕ້ອງປະກາດຂ່າວປະເສີດເລື່ອງລາຊະອານາຈັກຂອງພຣະເຈົ້າແກ່ເມືອງອື່ນໆ ເໝືອນກັນ
ເພາະວ່າທີ່ເຮົາໄດ້ຮັບໃຊ້ມາກໍເພາະເຫດການນີ້." [44]ແລ້ວພຣະອົງໄດ້ຊົງປະກາດໃນໂຮງທຳມະ
ເທດສະໜາທີ່ແຂວງຢູດາຍ.

# ບົດທີ 5

## ຈັບປາໄດ້ຫລາຍ

*(ມທ 4:18-22; ມຣກ 1:16-20)*

[1]ຢູ່ມາເມື່ອປະຊາຊົນກຳລັງບຸບຽດກັນເຂົ້າມາ ເພື່ອຈະໄດ້ຟັງພຣະທຳຂອງພຣະເຈົ້າ ພຣະ-
ເຢຊູຊົງຢືນຢູ່ແຄມທະເລສາບເຄັນເນຊາເຣັດ. [2]ຊົງເຫັນເຮືອສອງລຳຈອດຢູ່ຮິມຝັ່ງທະເລສາບ
ນັ້ນ ສ່ວນພວກຫາປາໄດ້ອອກໄປຈາກເຮືອນັ້ນແລ້ວ ເຂົາກຳລັງລ້າງມອງຢູ່. [3]ພຣະອົງໄດ້ສະ-
ເດັດເຂົ້າໄປໃນເຮືອລຳໜຶ່ງ ຄືເຮືອຂອງຊີໂມນ ແລ້ວຊົງຂໍໃຫ້ຖອຍເຮືອອອກໄປຈາກຝັ່ງໜ້ອຍໜຶ່ງ
ຈຶ່ງປະທັບລົງສັ່ງສອນປະຊາຊົນຈາກເຮືອນັ້ນ. [4]ເມື່ອຊົງຢຸດສອນແລ້ວພຣະອົງຊົງກ່າວຕໍ່ຊີໂມນ
ວ່າ, "ຈົ່ງພາຍອອກໄປບ່ອນເລິກ ແລ້ວຢ່ອນມອງຂອງພວກທ່ານລົງຈັບປາ." [5]ຊີໂມນທູນຕອບ
ວ່າ, "ອາຈານເຈົ້າເອີຍ, ພວກຂ້ານ້ອຍໄດ້ຫາຈົນອິດເມື່ອຍໝົດຄືນກໍບໍ່ໄດ້ຫຍັງ ແຕ່ຂ້ານ້ອຍຈະ
ຢ່ອນມອງລົງຕາມຄຳຂອງນາຍ." [6]ເມື່ອຢ່ອນລົງແລ້ວມອງຂອງເຂົາກໍຖືກປາຫລາຍເຕັມທີ ຈົນ
ມອງຂອງເຂົາພວມຂາດໄປ. [7]ເຂົາຈຶ່ງກວັກມືເອີ້ນໝູ່ທີ່ຢູ່ເຮືອລຳອື່ນໃຫ້ມາຊ່ອຍ ເມື່ອເຂົາມາ

ຊ່ອຍແລ້ວ ກໍໄດ້ປາເຕັມເຮືອທັງສອງລຳ ຈົນເຮືອເຂົາແຊມເກືອບຫລົ້ມ. [8]ເມື່ອຊີໂມນ ເປໂຕໄດ້
ເຫັນດັ່ງນັ້ນກໍຂາບລົງທີ່ພຣະຊານຸຂອງ ພຣະເຢຊູ ທູນວ່າ, "ນາຍເອີຍ, ຂໍເຊີນໄປໃຫ້ຫ່າງຈາກ
ຂ້ານ້ອຍທ້ອນ ເພາະຂ້ານ້ອຍເປັນຄົນບາບ." [9]ເພາະ ເປໂຕ ກັບໝູ່ທັງໝົດທີ່ຢູ່ນຳກັນນັ້ນ ໄດ້ງຶດ
ປະຫລາດໃຈດ້ວຍປາຫລາຍທີ່ເຂົາຈັບໄດ້ນັ້ນ. [10]ຢາໂກໂບ ແລະ ໂຢຮັນ ລູກຊາຍຂອງ ເຊເບດາຍ
ທີ່ເປັນໝູ່ຮ່ວມງານກັບ ຊີໂມນ ກໍປະຫລາດໃຈເໝືອນກັນ ພຣະເຢຊູ ຊົງກ່າວແກ່ຊີໂມນ ວ່າ, "ຢ່າຊູ່
ຢ້ານ ຕັ້ງແຕ່ນີ້ໄປທ່ານຈະເປັນຜູ້ຫາຄົນ." [11]ເມື່ອໄດ້ນຳເຮືອມາເຖິງຝັ່ງແລ້ວ ເຂົາກໍສະຫລະສິ່ງ
ສາລະພັດແລ້ວຕາມພຣະອົງໄປ.

## ຊົງໂຜດຄົນຂີ້ທູດໃຫ້ດີສະອາດ

*(ມທ 8:1-4; ມຣກ 1:40-45)*

[12]ເມື່ອ ພຣະເຢຊູ ຊົງຢູ່ໃນເມືອງໜຶ່ງ ເບິ່ງແມ! ມີຄົນຜູ້ໜຶ່ງເປັນຂີ້ທູດເຕັມຕົວ ເມື່ອຄົນນັ້ນໄດ້
ເຫັນ ພຣະເຢຊູ ກໍກົ້ມຂາບລົງອ້ອນວອນ ທູນພຣະອົງວ່າ, "ນາຍເອີຍ, ຖ້າທ່ານພໍໃຈກໍອາດຈະ
ເຮັດໃຫ້ຂ້ານ້ອຍດີສະອາດໄດ້." [13]ພຣະອົງຈຶ່ງຊົງຢຽດຫັດອອກຖືກຄົນນັ້ນແລ້ວຊົງກ່າວວ່າ,
"ເຮົາພໍໃຈແລ້ວ ຈົ່ງດີສະອາດເສຍ" ໃນທັນໃດພະຍາດຂີ້ທູດກໍຫາຍໄປຈາກຄົນນັ້ນ. [14]ພຣະອົງ
ຈຶ່ງຊົງສັ່ງຫ້າມຜູ້ນັ້ນບໍ່ໃຫ້ບອກຜູ້ໃດໂດຍຊົງກ່າວວ່າ, "ຈົ່ງໄປສະແດງຕົວຕໍ່ປະໂລຫິດແລະຖວາຍ
ເຄື່ອງບູຊາ ຕາມທີ່ ໂມເຊ ໄດ້ສັ່ງໄວ້ເພື່ອເປັນຫລັກຖານຕໍ່ເຂົາວ່າ ເຈົ້າດີສະອາດແລ້ວ." [15]ແຕ່ກິ
ຕິສັບຂອງພຣະອົງແຮ່ງຊ່າລືໄປອີກ ແລະປະຊາຊົນຈຳນວນຫລາຍໄດ້ຊຸມນຸມກັນເພື່ອຟັງພຣະ-
ອົງ ແລະ ເພື່ອຊົງເຮັດໃຫ້ພະຍາດຕ່າງໆ ຂອງເຂົາດີ. [16]ແຕ່ພຣະອົງໄດ້ສະເດັດອອກໄປກາງປ່າ
ແລະໄຫວ້ວອນຢູ່.

## ຊົງໂຜດຄົນເປ້ຍໃຫ້ດີ

*(ມທ 9:1-8; ມຣກ 2:1-12)*

[17]ຢູ່ມາວັນໜຶ່ງ ເມື່ອພຣະອົງຊົງສັ່ງສອນຢູ່ ມີພວກ ຟາຣີຊາຍ ແລະພວກຄູບາອາຈານນັ່ງຢູ່ຫັ້ນ
ດ້ວຍ ຄົນເຫລົ່ານີ້ໄດ້ມາຈາກທຸກໆ ບ້ານໃນແຂວງ ຄາລີເລ, ແຂວງ ຢູດາຍ ແລະຈາກກຸງ ເຢຣູ-
ຊາເລັມ ແລະລິດເດດຂອງອົງ ພຣະຜູ້ເປັນເຈົ້າ ກໍສະຖິດຢູ່ກັບພຣະອົງ ເພື່ອພຣະອົງຈະຊົງເຮັດ
ໃຫ້ເຂົາດີພະຍາດ. [18]ແລະ ເບິ່ງແມ! ມີຜູ້ຫາມຄົນເປ້ຍຜູ້ໜຶ່ງນອນເທິງບ່ອນນອນ ແລະເຂົາພະ-
ຍາຍາມຈະຫາມຄົນ ເປ້ຍນັ້ນ ເຂົ້າມາວາງຕໍ່ພຣະພັກຂອງພຣະອົງ. [19]ເມື່ອ ເຂົາຫາທາງ ເຂົ້າບໍ່ໄດ້
ເພາະມີຄົນຫລາຍ ເຂົາຈຶ່ງຂຶ້ນຫລັງຄາເຮືອນ ແລະຢ່ອນຄົນ ເປ້ຍກັບທັງບ່ອນນອນລົງມາຕາມ
ປ່ອງດິນຂໍຫວ່າງໆກາງໝູ່ຄົນຕໍ່ພຣະພັກ ພຣະເຢຊູ. [20]ເມື່ອພຣະອົງຊົງ ເຫັນຄວາມ ເຊື່ອຂອງ ເຂົາ
ແລ້ວກໍຊົງກ່າວກັບຄົນ ເປ້ຍນັ້ນວ່າ, "ຊາຍເອີຍ, ຄວາມຜິດບາບຂອງເຈົ້າໄດ້ຮັບອະໄພແລ້ວ."
[21]ຝ່າຍພວກນັກທຳ ແລະພວກ ຟາຣີຊາຍ ກໍຕັ້ງຕົ້ນຄຶດໃນໃຈວ່າ, "ຜູ້ນີ້ທີ່ເວົ້າໝິ່ນປະໝາດ ພຣະ-
ເຈົ້າ ແມ່ນໃຜ ໃຜຈະຍົກຄວາມຜິດບາບໄດ້ເວັ້ນແຕ່ ພຣະເຈົ້າ ເທົ່ານັ້ນ." [22]ແຕ່ເມື່ອ ພຣະເຢຊູ ຊົງ
ຊາບຄວາມຄຶດຂອງເຂົາ ພຣະອົງຈຶ່ງຊົງກ່າວວ່າ, "ເຫດສັນໃດທ່ານທັງຫລາຍຈຶ່ງຄຶດພິຈາລະນາ
ໃນໃຈ. [23]ທີ່ຈະວ່າ 'ຜິດບາບຂອງເຈົ້າໄດ້ຮັບອະໄພແລ້ວ' ຫລືຈະວ່າ 'ຈົ່ງລຸກຂຶ້ນແລະຍ່າງຫຍັງ
ໄປ' ອັນໃດຈະງ່າຍກວ່າກັນ. [24]ແຕ່ເພື່ອທ່ານທັງຫລາຍຈະໄດ້ຮູ້ວ່າ ບຸດມະນຸດມີສິດອຳນາດໃນ

ໂລກໃຫ້ອະໄພຄວາມຜິດບາບໄດ້” (ພຣະອົງຊົງກ່າວແກ່ຄົນເປ້ຍ ວ່າ) “ເຮົາສັ່ງເຈົ້າວ່າ ຈົ່ງລຸກ-
ຂຶ້ນຍົກເອົາບ່ອນນອນຂອງເຈົ້າໄປບ້ານເສຍ.” 25ໃນທັນໃດນັ້ນຄົນເປ້ຍໄດ້ລຸກຂຶ້ນຕໍ່ໜ້າຄົນທັງ
ປວງ ຍົກເອົາບ່ອນນອນຊຶ່ງຕົນໄດ້ນອນນັ້ນກັບໄປບ້ານ ໂດຍຮ້ອງສັນລະເສີນພຣະເຈົ້າ.
26ສ່ວນຄົນທັງປວງກໍອັດສະຈັນໃຈຫລາຍແລະພາກັນສັນລະເສີນພຣະເຈົ້າ ແລະເຕັມໄປດ້ວຍ
ຄວາມຢ້ານຈຶ່ງເວົ້າກັນວ່າ, “ວັນນີ້ພວກເຮົາໄດ້ເຫັນສິ່ງທີ່ເຫລືອເຊື່ອ.”

## ຊົງເອີ້ນເອົາເລວີ

*(ມທ 9:9-13; ມຣກ 2:13-17)*

27ພາຍຫລັງເຫດການເຫລົ່ານັ້ນ ພຣະອົງໄດ້ສະເດັດອອກໄປ ແລະຊົງເຫັນຄົນເກັບພາສີຜູ້
ໜຶ່ງຊື່ເລວີນັ່ງຢູ່ດ່ານພາສີ ພຣະອົງຈຶ່ງຊົງບອກທ່ານວ່າ, “ຈົ່ງຕາມເຮົາມາ.” 28ແລ້ວເລວີກໍສະ-
ຫລະຖິ້ມໝົດທຸກສິ່ງ ລຸກຂຶ້ນຕາມພຣະອົງໄປ.

29ເລວີໄດ້ຈັດໃຫ້ມີງານລ້ຽງອັນໃຫຍ່ຂຶ້ນໃນເຮືອນຂອງຕົນ ເພື່ອເປັນກຽດແກ່ພຣະອົງ ມີ
ຫລາຍຄົນຄືຄົນເກັບພາສີແລະຄົນອື່ນໆ ໄດ້ເຂົ້າຮ່ວມນຳ. 30ຝ່າຍພວກຟາຣິຊາຍແລະພວກນັກ-
ທຳຂອງຝ່າຍເຂົາ ໄດ້ຈົ່ມຕິຕຽນພວກສິດຂອງພຣະອົງວ່າ, “ເປັນຫຍັງ ພວກເຈົ້າຈຶ່ງກິນແລະດື່ມ
ດ້ວຍກັນກັບພວກເກັບພາສີແລະພວກນອກສິນທຳ.” 31ພຣະເຢຊູຊົງຕອບເຂົາວ່າ, “ຄົນປົກກະຕິ
ບໍ່ຕ້ອງການໝໍຢາ ແຕ່ຄົນເຈັບຕ້ອງການໝໍ. 32ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທຳ ແຕ່ມາ
ເອີ້ນເອົາຄົນນອກສິນທຳໃຫ້ຖິ້ມໃຈເກົ່າເອົາໃຈໃໝ່.”

## ບັນຫາເລື່ອງສິນອົດອາຫານ

*(ມທ 9:14-17; ມຣກ 2:18-22)*

33ເຂົາໄດ້ທູນພຣະອົງວ່າ, “ພວກສິດຂອງໂຢຮັນຖືສິນອົດອາຫານຢູ່ເລື້ອຍ ແລະທຳພິທີ
ອ້ອນວອນ ແລະສິດຂອງພວກຟາຣິຊາຍກໍເຮັດເໝືອນກັນ ແຕ່ສິດຂອງທ່ານກິນແລະດື່ມ.”
34ຝ່າຍພຣະເຢຊູຊົງຕອບເຂົາວ່າ, “ທ່ານຈະໃຫ້ສະຫາຍຂອງເຈົ້າບ່າວອົດອາຫານ ເມື່ອເຈົ້າ
ບ່າວຍັງຢູ່ກັບເຂົາບໍ່ໄດ້ຕີ້!”. 35ແຕ່ຈະມີວັນໜຶ່ງເມື່ອເຈົ້າບ່າວຖືກຍົກຍ້າຍຈາກເຂົາໄປ ເມື່ອນັ້ນ
ແຫລະ, ເຂົາຈະຖືສິນອົດອາຫານ.” 36ພຣະອົງຍັງຊົງກ່າວຄຳອຸປະມາຂໍ້ໜຶ່ງແກ່ເຂົາວ່າ, “ບໍ່-
ຫ່ອນມີຜູ້ໃດຈີກເອົາຜ້າຈາກເສື້ອໃໝ່ມາຕາບເສື້ອເກົ່າ ຖ້າເຮັດດັ່ງນັ້ນເສື້ອໃໝ່ກໍຂາດເສຍໄປ
ແລະຜ້າທີ່ເອົາມາຈາກເສື້ອໃໝ່ກໍຈະບໍ່ສົມກັບເສື້ອເກົ່າເໝືອນກັນ. 37ແລະບໍ່ມີຜູ້ໃດເອົາເຫລົ້າ
ແວງໃໝ່ມາໃສ່ໄວ້ໃນຖົງໜັງເກົ່າ ຖ້າເຮັດດັ່ງນັ້ນເຫລົ້າແວງໃໝ່ຈະເຮັດໃຫ້ຖົງໜັງນັ້ນຂາດໄປ,
ເຫລົ້າແວງຈະໄຫລອອກ, ແລະຖົງໜັງກໍຈະເສຍໄປເໝືອນກັນ. 38ແຕ່ເຫລົ້າແວງໃໝ່ຕ້ອງໃສ່ໄວ້
ໃນຖົງໜັງໃໝ່. 39ແລະບໍ່ມີຜູ້ໃດເມື່ອກິນເຫລົ້າແວງເກົ່າແລ້ວ ຈະຢາກໄດ້ເຫລົ້າແວງໃໝ່ ເພາະ
ເພິ່ນຍ່ອມເວົ້າວ່າ ‘ອັນເກົ່ານັ້ນແຫລະ, ດີ’.”

# ບົດທີ 6

## ບັນຫາເລື່ອງວັນຊະບາໂຕ

*(ມທ 12:1-8; ມຣກ 2:23-28)*

1ຢູ່ມາໃນວັນຊະບາໂຕວັນໜຶ່ງ ພຣະເຢຊູກຳລັງສະເດັດຜ່ານທົ່ງນາໄປ ສ່ວນພວກສິດຂອງ
ພຣະອົງໄດ້ເດັດເອົາຮວງເຂົ້າມາຍ່ອງກິນ. 2ມີພວກຟາຣີຊາຍບາງຄົນທູນຖາມວ່າ, "ເປັນຫຍັງ
ພວກທ່ານຈຶ່ງຜິດຕໍ່ກົດຂອງວັນຊະບາໂຕ?". 3ພຣະເຢຊູຊົງຕອບເຂົາວ່າ, "ພວກທ່ານຍັງບໍ່ໄດ້
ອ່ານເຖິງເລື່ອງທີ່ດາວິດໄດ້ເຮັດຫລື ເມື່ອເພິ່ນກັບພັກພວກຂອງເພິ່ນໄດ້ອຶດຢາກ. 4ຄືເພິ່ນໄດ້
ເຂົ້າໄປໃນທີ່ສະຖິດຂອງພຣະເຈົ້າ ເອົາເຂົ້າຈີ່ທີ່ຕັ້ງຖວາຍຕໍ່ພຣະພັກມາຮັບປະທານ ແລະປັນໃຫ້
ພັກພວກຂອງຕົນເໝືອນກັນ ຊຶ່ງພຣະບັນຍັດຫ້າມບໍ່ໃຫ້ໃຜກິນ ເວັ້ນແຕ່ປະໂລຫິດເທົ່ານັ້ນ."
5ແລ້ວພຣະອົງຊົງບອກເຂົາວ່າ, "ບຸດມະນຸດເປັນເຈົ້າຂອງວັນຊະບາໂຕເໝືອນກັນ."

## ຊົງໂຜດຄົນມືລີບ

*(ມທ 12:9-14; ມຣກ 3:1-6)*

6ໃນວັນຊະບາໂຕອີກວັນໜຶ່ງ ພຣະອົງໄດ້ສະເດັດເຂົ້າໄປໃນໂຮງທຳມະເທດສະໜາແລະສັ່ງ-
ສອນ ທີ່ນັ້ນມີຄົນຜູ້ໜຶ່ງມີເບື້ອງຂວາລີບ. 7ຝ່າຍພວກນັກທຳແລະພວກຟາຣີຊາຍຊອມເບິ່ງວ່າ
ພຣະອົງຈະຊົງໂຜດໃຫ້ດີໃນວັນຊະບາໂຕຫລື ເພື່ອເຂົາຈະຫາເຫດຟ້ອງພຣະອົງໄດ້. 8ແຕ່ພຣະ-
ອົງຊົງຊາບຄວາມຄິດຂອງເຂົາ ຈຶ່ງຊົງບອກຄົນມືລີບນັ້ນວ່າ, "ຈົ່ງລຸກຂຶ້ນມາຢືນຢູ່ຂ້າງໜ້າສາ"
ຄົນນັ້ນກໍລຸກຢືນຂຶ້ນຢູ່ແລ້ວ ພຣະເຢຊູຊົງກ່າວແກ່ເຂົາວ່າ. 9"ເຮົາຈະຖາມພວກທ່ານວ່າ ໃນວັນ
ຊະບາໂຕຄວນຈະເຮັດດີ ຫລືຄວນຈະເຮັດຊົ່ວ ຈະເອົາຊີວິດໄວ້ ຫລືຈະເຮັດໃຫ້ຊີວິດດັບເສຍ?".
10ພຣະອົງຈຶ່ງທອດພຣະເນດເບິ່ງອ້ອມເຂົາທຸກຄົນ ແລ້ວຊົງກ່າວແກ່ຄົນມືລີບນັ້ນວ່າ, "ເຈົ້າຈົ່ງ
ຢຽດມືອອກ" ຄົນນັ້ນກໍເຮັດຕາມ ແລະມືຂອງລາວກໍດີເປັນປົກກະຕິ. 11ຝ່າຍຄົນເຫລົ່ານັ້ນກໍເຕັມ
ໄປດ້ວຍຄວາມຄຽດແຄ້ນ ແລະໄດ້ປຶກສາກັນວ່າຈະເຮັດຢ່າງໃດກັບພຣະເຢຊູໄດ້.

## ຊົງເອີ້ນເອົາສາວົກສິບສອງຄົນ

*(ມທ 10:1-4; ມຣກ 3:13-19)*

12ໃນຄາວນັ້ນພຣະອົງໄດ້ສະເດັດຂຶ້ນພູເພື່ອຈະໄຫວ້ວອນ ແລະໄດ້ຊົງໄຫວ້ວອນພຣະເຈົ້າ
ຕະຫລອດຄືນ. 13ຄັນຮຸ່ງເຊົ້າແລ້ວພຣະອົງໄດ້ຊົງເອີ້ນເອົາພວກສິດຂອງຕົນມາ ຈາກພວກສິດ
ນັ້ນພຣະອົງຊົງເລືອກເອົາສິບສອງຄົນ ແລ້ວຊົງຕັ້ງຊື່ວ່າອັກຄະສາວົກ. 14ຄືຊີໂມນ ທີ່ພຣະອົງ
ຊົງຕັ້ງຊື່ອີກວ່າເປໂຕ, ອັນເດອານ້ອງຊາຍຂອງເປໂຕ, ຢາໂກໂບແລະໂຢຮັນ, ຟີລິບແລະບາ-
ຣະໂທໂລມາຍ. 15ມັດທາຍແລະໂທມາ, ຢາໂກໂບລູກຊາຍຂອງອາລະຟາຍ, ຊີໂມນ ທີ່ເອີ້ນ
ວ່າ "ຜູ້ຮັກຊາດ". 16ຢູດາລູກຊາຍຂອງຢາໂກໂບ, ແລະຢູດາອິສະກາຣີອົດ ທີ່ກາຍເປັນຜູ້ທໍລະ
ຍົດຕໍ່ນາຍຂອງຕົນ.

## ຊົງໂຜດປວງຊົນໃຫ້ດີພະຍາດ

*(ມທ 4:23-25)*

17ແລ້ວພຣະອົງໄດ້ສະເດັດພ້ອມກັບພວກອັກຄະສາວົກ ລົງມາຢືນຢູ່ທີ່ຮາບພຽງບ່ອນໜຶ່ງ

ບ່ອນນັ້ນມີສິດຂອງພຣະອົງຫລາຍຄົນກັບປະຊາຊົນຈຳນວນຫລວງຫລາຍ ທີ່ມາຈາກທົ່ວແຂວງ
ຢູດາຍ, ຈາກກຸງເຢຣູຊາເລັມ, ແລະຈາກຝັ່ງທະເລເຂດເມືອງຕີເຣກັບເມືອງຊີໂດນ. [18]ເຂົາໄດ້
ມາເພື່ອຟັງພຣະອົງ ແລະເພື່ອໃຫ້ດີພະຍາດຕ່າງໆ ຂອງເຂົາ ແລະບັນດາຄົນທີ່ຜີຖ່ອຍຮ້າຍກຸກ
ກວນກໍຊົງໂຜດໃຫ້ດີເໝືອນກັນ. [19]ປະຊາຊົນໄດ້ພະຍາຍາມຈະຖືກຕ້ອງພຣະອົງ ເຫດວ່າມີລິດ
ກຳລັງອອກມາຈາກພຣະອົງເຮັດໃຫ້ເຂົາດີພະຍາດທຸກຄົນ.

## ຄວາມສຸກແລະວິບັດ

*(ມທ 5:1-12)*

[20]ພຣະອົງທອດພະເນດຫລຽວເບິ່ງພວກສາວົກແລ້ວຊົງກ່າວວ່າ,

"ທ່ານທັງຫລາຍທີ່ຍາກຈົນກໍເປັນສຸກ
ເພາະແຜ່ນດິນຂອງ **ພຣະເຈົ້າ** ເປັນຂອງພວກທ່ານ.
[21] ທ່ານທັງຫລາຍທີ່ອຶດຢາກດຽວນີ້ກໍເປັນສຸກ
ເພາະວ່າ **ພຣະເຈົ້າ** ຈະຊົງໂຜດໃຫ້ພວກທ່ານອີ່ມເຕັມ,
ທ່ານທັງຫລາຍທີ່ຮ້ອງໄຫ້ດຽວນີ້ກໍເປັນສຸກ
ເພາະວ່າພວກທ່ານຈະໄດ້ຫົວ."
[22] "ເມື່ອໃດຄົນທັງຫລາຍກຽດຊັງພວກທ່ານ, ຕັດພວກທ່ານຖິ້ມເສຍ,
ຕິຕຽນນິນທາແລະປະຕິເສດຊື່ຂອງພວກທ່ານວ່າຊົ່ວ
ເພາະພວກທ່ານເຫັນແກ່ບຸດມະນຸດ ເມື່ອນັ້ນແຫລະ, ພວກທ່ານຈະເປັນສຸກ.
[23] ໃນວັນນັ້ນພວກທ່ານຈົ່ງຊົມຊື່ນຍິນດີແລະຕື່ນເຕັ້ນດ້ວຍຄວາມຍິນດີ
ເພາະເບິ່ງແມ! ບຳເໜັດຂອງພວກທ່ານມີບໍລິບູນຢູ່ໃນສະຫວັນ
ເພາະວ່າບັນພະບຸລຸດຂອງເຂົາໄດ້ເຮັດຢ່າງນັ້ນແກ່ຜູ້ປະກາດພຣະທຳເໝືອນກັນ.
[24] "ແຕ່ວິບັດແກ່ທ່ານທັງຫລາຍຜູ້ເປັນຄົນຮັ່ງມີ
ເພາະວ່າພວກທ່ານໄດ້ຮັບຄວາມສຸກຢູ່ແລ້ວ.
[25] ວິບັດແກ່ທ່ານທັງຫລາຍທີ່ອີ່ມເຕັມດຽວນີ້
ເພາະວ່າພວກທ່ານຈະອຶດຢາກ
ວິບັດແກ່ທ່ານທັງຫລາຍທີ່ຫົວດຽວນີ້
ເພາະວ່າພວກທ່ານຈະທຸກໂສກແລະຮ້ອງໄຫ້."
[26] "ເມື່ອໃດຄົນທັງຫລາຍຍ້ອງຍໍວ່າພວກທ່ານດີ ເມື່ອນັ້ນແຫລະ, ວິບັດຈະມີແກ່ພວກທ່ານ
ເພາະບັນພະບຸລຸດຂອງເຂົາໄດ້ເຮັດຢ່າງນັ້ນແກ່ຜູ້ປະກາດພຣະທຳຂີ້ໂລບເໝືອນກັນ."

## ຄວາມຮັກຕໍ່ສັດຕູ

*(ມທ 5:38-48; ມທ 7:12)*

[27]"ແຕ່ເຮົາບອກທ່ານທັງຫລາຍຜູ້ກຳລັງຟັງຢູ່ວ່າ ຈົ່ງຮັກສັດຕູຂອງພວກທ່ານຈົ່ງເຮັດດີແກ່ຜູ້
ກຽດຊັງພວກທ່ານ. [28]ຈົ່ງອວຍພອນແກ່ຜູ້ທີ່ປ້ອຍດ່າພວກທ່ານ, ຈົ່ງອ້ອນວອນເພື່ອຜູ້ທີ່ກ່າວ
ຫຍາບຊ້າຕໍ່ພວກທ່ານ. [29]ຖ້າຜູ້ໃດຕົບແກ້ມຂອງທ່ານເບື້ອງໜຶ່ງ ຈົ່ງປິ່ນອີກເບື້ອງໜຶ່ງໃຫ້ເຂົາ

ແລະຖ້າຜູ້ໃດຍາດເອົາເສື້ອຊັ້ນນອກຂອງທ່ານໄປ ຖ້າເຂົາຈະເອົາເສື້ອໃນກໍຢ່າຫວງຫ້າມ. [30]ຈົ່ງ
ໃຫ້ແກ່ທຸກຄົນທີ່ຂໍຈາກທ່ານ ຖ້າຜູ້ໃດເອົາສິ່ງຂອງຂອງທ່ານໄປ ຢ່າຊູ່ທວງເອົາຄືນ. [31]ທ່ານຢາກ
ໃຫ້ເຂົາເຮັດຢ່າງໃດແກ່ທ່ານ ຈົ່ງເຮັດຢ່າງນັ້ນແກ່ເຂົາເໝືອນກັນ.

[32]"ຖ້າແມ່ນທ່ານຮັກຄົນທັງຫລາຍທີ່ຮັກທ່ານ ຈະຊົງນັບວ່າເປັນຄຸນອັນໃດແກ່ທ່ານ ເພາະ
ເຖິງແມ່ນຄົນນອກສິນທຳກໍຍັງຮັກຄົນທີ່ຮັກເຂົາເໝືອນກັນ. [33]ຖ້າທ່ານເຮັດດີກັນກັບຄົນທີ່ເຮັດດີ
ຕໍ່ທ່ານ ຈະຊົງນັບວ່າເປັນຄຸນອັນໃດແກ່ທ່ານ ເພາະຄົນນອກສິນທຳກໍຍັງເຮັດຢ່າງດຽວກັນ.
[34]ຖ້າທ່ານທັງຫລາຍໃຫ້ຢືມແກ່ຜູ້ທີ່ທ່ານຫວັງວ່າຈະໄດ້ຮັບຄືນ ກໍຈະຊົງນັບວ່າເປັນຄຸນອັນໃດແກ່
ທ່ານ ເຖິງແມ່ນຄົນບາບກໍຍັງໃຫ້ຄົນບາບຢືມໂດຍຫວັງວ່າຈະໄດ້ຮັບຄືນທໍ່ກັນ. [35]ແຕ່ຈົ່ງຮັກສັດຕູ
ຂອງທ່ານທັງຫລາຍແລະຈົ່ງເຮັດດີຕໍ່ເຂົາ ຈົ່ງໃຫ້ເຂົາຢືມໂດຍບໍ່ຫວັງຈະໄດ້ຮັບຄືນອີກ ບຳເໜັດ
ຂອງທ່ານທັງຫລາຍຈຶ່ງຈະມີບໍລິບູນ ແລະທ່ານທັງຫລາຍຈະເປັນບຸດຂອງພຣະຜູ້ສູງສຸດ ເພາະ-
ວ່າພຣະອົງຍັງຊົງໂຜດແກ່ຄົນທີ່ເນລະຄຸນແລະຄົນຊົ່ວ. [36]ທ່ານທັງຫລາຍຈົ່ງມີຄວາມເມດຕາ
ກະລຸນາ ເໝືອນຢ່າງພຣະບິດາຂອງທ່ານຊົງມີພຣະໄທເມດຕາກະລຸນາ.

## ການກ່າວໂທດຜູ້ອື່ນ

*(ມທ 7:1-5)*

[37]"ຢ່າກ່າວໂທດໃສ່ເຂົາແລະ ພຣະເຈົ້າ ຈະບໍ່ຊົງກ່າວໂທດໃສ່ທ່ານ ຢ່າທຳໂທດເຂົາແລະ
ພຣະເຈົ້າ ຈະບໍ່ຊົງທຳໂທດທ່ານ ຈົ່ງຍົກໂທດໃຫ້ເຂົາແລະ ພຣະເຈົ້າ ຈະຊົງຍົກໂທດໃຫ້ທ່ານ.
[38]ຈົ່ງໃຫ້ເຂົາແລະ ພຣະເຈົ້າ ຈະຊົງໃຫ້ທ່ານ ແລະໃນຕັກຂອງທ່ານຈະໄດ້ຮັບຕວງດ້ວຍເຄື່ອງ
ຜອງຍັດສັ່ນລົງແໜ້ນເຕັມລົ້ນ ເພາະວ່າພວກທ່ານຈະຕວງໃຫ້ເຂົາດ້ວຍເຄື່ອງຜອງອັນໃດ ພຣະ-
ເຈົ້າ ຈະຊົງຕວງໃຫ້ພວກທ່ານດ້ວຍເຄື່ອງຜອງອັນນັ້ນ."

[39]ແລ້ວພຣະອົງຊົງກ່າວແກ່ເຂົາເປັນຄຳອຸປະມາວ່າ, "ຄົນຕາບອດຈະຈູງຄົນຕາບອດໄປບໍ່ໄດ້
ຕີ້ ເຂົາທັງສອງຈະບໍ່ຕົກໃນຂຸມຫລື. [40]ສິດບໍ່ທ່ອນໃຫຍ່ກວ່າຄູ ແຕ່ສິດທຸກຄົນທີ່ຮັບການເຝິກ
ສອນຄົບແລ້ວ ກໍຈະເປັນເໝືອນຄູຂອງຕົນ. [41]ເປັນຫຍັງທ່ານຫລຽວເຫັນຂີ້ເຫຍື້ອທີ່ຢູ່ໃນຕາພີ່-
ນ້ອງຂອງທ່ານ ແຕ່ໄມ້ທັງທ່ອນທີ່ຢູ່ໃນຕາຕົນເອງທ່ານບໍ່ຮູ້ສຶກ. [42]ເປັນສັນໃດທ່ານຈຶ່ງຈະເວົ້າກັບ
ພີ່ນ້ອງຂອງຕົນໄດ້ວ່າ 'ພີ່ນ້ອງເອີຍ, ໃຫ້ຂ້ອຍເຂັ່ຍຂີ້ເຫຍື້ອອອກຈາກຕາຂອງເຈົ້າ' ແຕ່ທ່ານເອງ
ໄມ້ທັງທ່ອນທີ່ຢູ່ໃນຕາຂອງຕົນກໍຍັງບໍ່ເຫັນ ໂອ ຄົນໜ້າຊື່ໃຈຄົດເອີຍ, ຈົ່ງເອົາໄມ້ທັງທ່ອນອອກ
ຈາກຕາຂອງຕົນກ່ອນ ແລ້ວທ່ານຈະເຫັນໄດ້ຄັກ ຈຶ່ງຈະເຂັ່ຍຂີ້ເຫຍື້ອອອກຈາກຕາພີ່ນ້ອງຂອງ
ທ່ານໄດ້.

## ການສັງເກດຮູ້ໄດ້ດ້ວຍຜົນ

*(ມທ 7:16-20; ມທ 12:34-35)*

[43]"ດ້ວຍວ່າຕົ້ນໄມ້ດີບໍ່ທ່ອນເກີດຜົນບໍ່ດີ ແລະຕົ້ນບໍ່ດີບໍ່ທ່ອນເກີດຜົນດີ. [44]ເພາະວ່າຈະຮູ້ຈັກ
ຕົ້ນໄມ້ທຸກຕົ້ນໄດ້ກໍເພາະຜົນຂອງມັນ ເຫດວ່າເຂົາບໍ່ທ່ອນເກັບໝາກເດື່ອເທດຈາກຕົ້ນມີໜາມ
ແລະບໍ່ທ່ອນເກັບໝາກອະງຸ່ນຈາກພຸ່ມມີໜາມ. [45]ຄົນດີຍ່ອມເອົາຂອງດີອອກມາຈາກຄັງດີແຫ່ງ
ໃຈຂອງຕົນ ແລະຄົນຊົ່ວກໍຍ່ອມເອົາຂອງຊົ່ວອອກມາຈາກຄັງຊົ່ວແຫ່ງໃຈຂອງຕົນ ເພາະວ່າໃຈ

ເຕັມລົ້ນດ້ວຍອັນໃດ ປາກກໍເວົ້າອອກມາຢ່າງນັ້ນ.

## ຮາກຖານສອງຢ່າງ

*(ມທ 7:24-27)*

46"ເຫດສັນໃດທ່ານທັງຫລາຍຈຶ່ງເອີ້ນເຮົາວ່າ, 'ນາຍ ນາຍ!' ແຕ່ບໍ່ໄດ້ເຮັດຕາມສິ່ງທີ່ເຮົາ
ບອກນັ້ນ.

47ທຸກຄົນທີ່ມາຫາເຮົາ, ແລະຟັງຄຳຂອງເຮົາ, ແລະປະຕິບັດຕາມ ເຮົາຈະແຈ້ງໃຫ້ທ່ານຮູ້ວ່າ
ຄົນນັ້ນປຽບເໝືອນຜູ້ໃດ. 48ກໍປຽບເໝືອນຄົນຜູ້ໜຶ່ງທີ່ກໍ່ສ້າງຕຶກ ຜູ້ນັ້ນຂຸດດິນລົງເລິກແລ້ວຕັ້ງ
ຮາກເທິງດານຫີນ ແລະເມື່ອນ້ຳມາຖ້ວມແລ້ວແປວນ້ຳໄຫລທົ່ງໃສ່ ແຕ່ບໍ່ອາດຈະເຮັດໃຫ້ຕຶກນັ້ນ
ຫວັ່ນໄຫວ ເພາະວ່າໄດ້ສ້າງດີແລ້ວ. 49ສ່ວນຄົນທີ່ໄດ້ຍິນຄຳນັ້ນແລະບໍ່ປະຕິບັດຕາມ ກໍປຽບ
ເໝືອນຄົນໜຶ່ງທີ່ໄດ້ກໍ່ສ້າງຕຶກເທິງດິນດ້ວຍບໍ່ກໍຮາກ ເມື່ອແປວນ້ຳໄຫລທົ່ງໃສ່ຕຶກນັ້ນມັນກໍເຈື່ອນ
ລົງທັນທີ ແລະຄວາມຈິບຫາຍຂອງຕຶກນັ້ນກໍເປັນການໃຫຍ່ຫລາຍ."

# ບົດທີ 7

## ຊົງໂຜດຂ້ອຍໃຊ້ຂອງນາຍຮ້ອຍໃຫ້ດີ

*(ມທ 8:5-13; ຢຮ 4:43-54)*

1ເມື່ອ ພຣະເຢຊູ ຊົງກ່າວຄຳເຫລົ່ານັ້ນໃຫ້ພົນລະເມືອງຟັງໝົດແລ້ວ ພຣະອົງກໍສະເດັດເຂົ້າໄປ
ໃນເມືອງ ກາເປນາອູມ. 2ມີຂ້ອຍໃຊ້ຂອງນາຍທະຫານຄົນໜຶ່ງທີ່ນາຍຮັກຫລາຍ ປ່ວຍຢູ່ໃກ້ຈະ
ຕາຍແລ້ວ. 3ເມື່ອນາຍຮ້ອຍໄດ້ຍິນເຖິງ ພຣະເຢຊູ ຈຶ່ງໄດ້ໃຊ້ເຖົ້າແກ່ບາງຄົນຂອງພວກຢິວ ໃຫ້
ໄປອ້ອນວອນເຊີນພຣະອົງສະເດັດມາໂຜດຂ້ອຍໃຊ້ຂອງຕົນໃຫ້ດີ. 4ເມື່ອຄົນເຫລົ່ານັ້ນມາເຖິງ
ພຣະເຢຊູ ແລ້ວ ເຂົາກໍອ້ອນວອນພຣະອົງດ້ວຍໃຈຮ້ອນຮົນວ່າ, "ນາຍຮ້ອຍຜູ້ນັ້ນສົມຄວນທີ່ຈະ
ເຮັດການນີ້ໃຫ້ເພິ່ນ. 5ເພາະວ່າເພິ່ນຮັກປະເທດຊາດຂອງເຮົາ ແລະແມ່ນຜູ້ນີ້ແຫລະ, ໄດ້ສ້າງ
ໂຮງທຳມະເທດສະໜາໃຫ້ພວກເຮົາ." 6ແລະ ພຣະເຢຊູ ຈຶ່ງສະເດັດໄປກັບເຂົາ ເມື່ອສະເດັດ
ເກືອບຈະເຖິງແລ້ວ ນາຍຮ້ອຍທະຫານໄດ້ໃຊ້ໝູ່ສະຫາຍໄປຫາພຣະອົງທູນວ່າ, "ນາຍເອີຍ, ຢ່າ
ຊູ່ລຳບາກທ້ອນ ເພາະວ່າຂ້ານ້ອຍເປັນຄົນບໍ່ສົມຄວນທີ່ຈະໃຫ້ທ່ານເຂົ້າໄປລຸ່ມຫລັງຄາເຮືອນ
ຂອງຂ້ານ້ອຍ. 7ເພາະເຫດນັ້ນຂ້ານ້ອຍຈຶ່ງຖືວ່າເປັນຜູ້ບໍ່ສົມຄວນທີ່ຈະໄປຫາທ່ານ ແຕ່ຂໍທ່ານຈົ່ງ
ກ່າວພຽງຄຳດຽວ ແລະຄົນໃຊ້ຂອງຂ້ານ້ອຍຄົງຈະດີພະຍາດ. 8ເຫດວ່າຂ້ານ້ອຍເປັນຄົນທີ່ຢູ່ໃຕ້
ວິໄນທະຫານ ແລະຍັງມີທະຫານຢູ່ໃຕ້ບັງຄັບບັນຊາຂອງຂ້ານ້ອຍອີກ ຄືຂ້ານ້ອຍສັ່ງຄົນນີ້ວ່າ
'ໄປ' ມັນກໍໄປ ສັ່ງອີກຄົນໜຶ່ງວ່າ 'ມາ' ມັນກໍມາ ແລະບອກແກ່ຂ້ອຍໃຊ້ຂອງຂ້ານ້ອຍວ່າ 'ຈົ່ງ
ເຮັດສິ່ງນີ້' ມັນກໍເຮັດ." 9ເມື່ອ ພຣະເຢຊູ ໄດ້ຍິນຄຳເຫລົ່ານັ້ນແລ້ວກໍປະຫລາດພຣະໄທດ້ວຍນາຍ
ນັ້ນ ຈຶ່ງຊົງຫລຽວຫລັງກ່າວກັບປະຊາຊົນທີ່ຕາມມາວ່າ, "ເຮົາບອກທ່ານທັງຫລາຍວ່າ ແມ່ນໃນ
ພວກ ອິສຣາເອນ ເຮົາກໍບໍ່ໄດ້ພົບຄວາມເຊື່ອໃຫຍ່ເທົ່ານີ້." 10ຝ່າຍພວກທີ່ຮັບໃຊ້ມານັ້ນ ເມື່ອກັບ
ໄປເຖິງເຮືອນກໍໄດ້ພົບຂ້ອຍໃຊ້ຜູ້ນັ້ນດີພະຍາດແລ້ວ.

## ຊົງບັນດານໃຫ້ລູກຊາຍແມ່ໝ້າຍເປັນຄືນມາ

11ຫລັງຈາກນັ້ນໜ້ອຍໜຶ່ງພຣະອົງກໍສະເດັດໄປຍັງເມືອງໜຶ່ງຊື່ນາອີນ ພວກສາວົກຂອງ
ພຣະອົງກັບປະຊາຊົນຫລວງຫລາຍໄດ້ຕາມພຣະອົງໄປ. 12ເມື່ອສະເດັດມາໃກ້ປະຕູເມືອງນັ້ນ
ເບິ່ງແມ! ມີຄົນກຳລັງຫາມສົບຊາຍໜຸ່ມຜູ້ໜຶ່ງອອກມາ ເປັນລູກຊາຍຄົນດຽວຂອງແມ່ ແລະນາງ
ກໍເປັນແມ່ໝ້າຍ ມີຊາວເມືອງຫລາຍສົມຄວນອອກມານຳຍິງນັ້ນ. 13ເມື່ອຊົງເຫັນຍິງນັ້ນ ພຣະອົງ
ກໍຊົງເມດຕາແລ້ວຊົງກ່າວວ່າ, "ຢ່າຮ້ອງໄຫ້." 14ແລ້ວພຣະອົງສະເດັດເຂົ້າໄປໃກ້ບາຍໂລງ
ພວກຫາມສົບນັ້ນກໍຢຸດຢືນຢູ່ ພຣະອົງຈຶ່ງຊົງສັ່ງວ່າ, "ຊາຍໜຸ່ມເອີຍ, ເຮົາສັ່ງເຈົ້າວ່າ ຈົ່ງລຸກ-
ຂຶ້ນ." 15ແລ້ວຄົນທີ່ຕາຍນັ້ນກໍລຸກຂຶ້ນນັ່ງຕັ້ງຕົ້ນເວົ້າ ພຣະອົງຈຶ່ງຊົງມອບຊາຍນັ້ນໃຫ້ແມ່ຂອງ
ລາວ. 16ຄວາມຢ້ານສະດຸ້ງຕົກໃຈກໍຕົກໃສ່ເຂົາທັງປວງ ເຂົາຈຶ່ງສັນລະເສີນພຣະເຈົ້າວ່າ, "ທ່ານ
ຜູ້ປະກາດພຣະທຳຜູ້ໃຫຍ່ໄດ້ເກີດຂຶ້ນຖ້າມກາງພວກເຮົາ ແລ້ວແລະພຣະເຈົ້າໄດ້ສະເດັດມາ
ຢ້ຽມຢາມພົນລະເມືອງຂອງພຣະອົງແລ້ວ." 17ເລື່ອງຂອງພຣະອົງໄດ້ຊ່າລືໄປທົ່ວແຂວງຢູດາຍ
ແລະທົ່ວຂົງເຂດທີ່ຢູ່ລ້ອມຮອບນັ້ນ.

## ລູກສິດໂຢຮັນບັບຕິສະໂຕມາໄຫວ້ພຣະເຢຊູ

*(ມທ 11:2-19)*

18ຝ່າຍພວກສິດຂອງໂຢຮັນກໍໄດ້ເລົ່າເຫດການທັງປວງນັ້ນໃຫ້ທ່ານຟັງ. 19ໂຢຮັນຈຶ່ງເອີ້ນສິດ
ຂອງຕົນສອງຄົນ ໃຊ້ເຂົາໄປຫາພຣະຜູ້ເປັນເຈົ້າທູນຖາມວ່າ, "ທ່ານເປັນຜູ້ທີ່ຈະມານັ້ນຫລື ຫລື
ຈະຕ້ອງຄອຍຖ້າຜູ້ອື່ນ." 20ເມື່ອເຂົາທັງສອງມາເຖິງພຣະອົງກໍທູນວ່າ, "ໂຢຮັນບັບຕິສະໂຕໄດ້
ໃຊ້ພວກຂ້ານ້ອຍມາຖາມວ່າ 'ທ່ານເປັນຜູ້ທີ່ຈະມານັ້ນຫລື ຫລືຈະຕ້ອງຄອຍຜູ້ອື່ນ'." 21ໃນເວລາ
ນັ້ນພຣະອົງໄດ້ຊົງໂຜດໃຫ້ຫລາຍຄົນດີພະຍາດໂລຄາຕ່າງໆ ແລະໃຫ້ພົ້ນຈາກຜີຮ້າຍ ແລະໄດ້
ຊົງໂຜດຄົນຕາບອດຫລາຍຄົນໃຫ້ເຫັນຮຸ່ງ, 22ແລ້ວພຣະອົງຊົງຕອບສິດທັງສອງນັ້ນວ່າ, "ຈົ່ງໄປ
ແຈ້ງແກ່ໂຢຮັນ ຕາມທີ່ທ່ານໄດ້ເຫັນແລະໄດ້ຍິນ ຄືວ່າຄົນຕາບອດກໍເຫັນຮຸ່ງ, ຄົນຂາເສັ້ງກໍຍ່າງ
ເປັນປົກກະຕິ, ຄົນຂີ້ທູດກໍດີສະອາດ, ຄົນຫູໜວກກໍໄດ້ຍິນ, ຄົນຕາຍແລ້ວກໍເປັນຄືນມາ, ແລະ
ຂ່າວປະເສີດກໍປະກາດແກ່ຄົນອະນາຖາ. 23ບຸກຄົນໃດບໍ່ສະດຸດສົງໃສເພາະເຮົາ ຜູ້ນັ້ນກໍເປັນ
ສຸກ."

24ເມື່ອພວກຮັບໃຊ້ຂອງໂຢຮັນໄປແລ້ວ ພຣະອົງກໍຊົງຕັ້ງຕົ້ນກ່າວກັບປະຊາຊົນເຖິງເລື່ອງ
ໂຢຮັນວ່າ, "ທ່ານທັງຫລາຍໄດ້ອອກໄປໃນປ່າເພື່ອເບິ່ງຫຍັງ ເພື່ອເບິ່ງຕົ້ນອໍ້ໄຫວໄປມາດ້ວຍລົມ
ພັດຫລື. 25ແຕ່ທ່ານທັງຫລາຍອອກໄປເບິ່ງຫຍັງ ໄປເບິ່ງຄົນນຸ່ງຫົ່ມເຄື່ອງລະອຽດອ່ອນນວນຫລື
ເບິ່ງແມ! ຄົນທີ່ນຸ່ງຫົ່ມເຄື່ອງອັນງົດງາມແລະຢູ່ກິນດ້ວຍຂອງປະນີດຍ່ອມຢູ່ໃນລາຊະວັງ. 26ແຕ່
ພວກທ່ານອອກໄປເບິ່ງຫຍັງ ເບິ່ງຜູ້ປະກາດພຣະທຳຫລື ແມ່ນແລ້ວເຮົາບອກພວກທ່ານວ່າ
ທ່ານຜູ້ນັ້ນກໍໃຫຍ່ກວ່າຜູ້ປະກາດພຣະທຳອີກ. 27ຄືໂຢຮັນຜູ້ນີ້ແຫລະ, ທີ່ພຣະຄຳພີກ່າວຂຽນໄວ້
ເຖິງເພິ່ນວ່າ, 'ເບິ່ງແມ, ເຮົາໃຊ້ຜູ້ຮັບໃຊ້ຂອງເຮົາໄປກ່ອນໜ້າທ່ານຜູ້ຮັບໃຊ້ນັ້ນຈະຈັດແຈງຫົນ-
ທາງຂອງທ່ານໄວ້ກ່ອນໜ້າທ່ານ'. 28ເຮົາບອກພວກທ່ານວ່າ ໃນບັນດາຜູ້ທີ່ເກີດຈາກຜູ້ຍິງນັ້ນບໍ່ມີ
ຜູ້ໃດໃຫຍ່ກວ່າໂຢຮັນ ແຕ່ຜູ້ນ້ອຍທີ່ສຸດໃນລາຊະແຜ່ນດິນຂອງພຣະເຈົ້າ ກໍໃຫຍ່ກວ່າໂຢຮັນ

ອີກ.” [29](ຝ່າຍຄົນທັງປວງທີ່ໄດ້ຍິນພ້ອມທັງພວກເກັບພາສີກໍໄດ້ຍອມຮັບວ່າ ພຣະເຈົ້າ ຍຸດຕິທຳ
ໂດຍທີ່ເຂົາໄດ້ຮັບບັບຕິສະມາຂອງ ໂຢຮັນ ແລ້ວ. [30]ແຕ່ພວກ ຟາຣີຊາຍ ແລະພວກທຳບັນດິດໄດ້
ຂັດຂວາງພຣະປະສົງຂອງ ພຣະເຈົ້າ ສຳລັບເຂົາ ໂດຍທີ່ເຂົາບໍ່ໄດ້ຮັບບັບຕິສະມາຈາກ ໂຢຮັນ.)

[31]“ເຫດສັນນັ້ນເຮົາຈະປຽບຄົນສະໄໝນີ້ກັບອັນໃດ ແລະເຂົາເປັນເໝືອນກັບອັນໃດ. [32]ປຽບ
ເໝືອນກັບໝູ່ເດັກນ້ອຍທີ່ນັ່ງຢູ່ກາງຕະຫລາດຮ້ອງໃສ່ກັນວ່າ,

‘ຕູໄດ້ເປົ່າປີ່ໃຫ້ສູ ແຕ່ສູບໍ່ໄດ້ຟ້ອນລຳ
ຕູໄດ້ຮ້ອງໄຫ້ຮ່ຳໄຮ ແຕ່ສູບໍ່ໄດ້ຕີອົກຕ້ອນຮັບ’.

[33]ເພາະວ່າ ໂຢຮັນ ບັບຕິສະໂຕ ໄດ້ມາ ກໍບໍ່ກິນເຂົ້າຫລືດື່ມເຫລົ້າແວງ ແລະພວກທ່ານເວົ້າວ່າ ‘ມີ
ຜີສິງຢູ່’. [34]ສ່ວນບຸດມະນຸດໄດ້ມາທັງກິນແລະດື່ມ ແລະພວກທ່ານເວົ້າວ່າ ‘ເບິ່ງແມ, ນີ້ເປັນຄົນ
ກິນເກີນສ່ວນແລະມັກເມົາ, ເປັນເພື່ອນຂອງຄົນເກັບພາສີແລະຄົນນອກສິນທຳ’. [35]ແຕ່ພຣະປັນ-
ຍາກໍປະກົດວ່າຖືກຕ້ອງແລ້ວໂດຍບັນດາຜົນຂອງພຣະປັນຍານັ້ນ.”

## ພຣະເຢຊູໃນເຮືອນຂອງຊີໂມນຟາຣີຊາຍ

[36]ມີຄົນໜຶ່ງໃນພວກ ຟາຣີຊາຍ ໄດ້ເຊີນພຣະອົງໄປສະເຫວີຍອາຫານໃນເຮືອນຂອງຕົນພຣະ-
ອົງຈຶ່ງສະເດັດເຂົ້າໄປໃນເຮືອນຂອງ ຟາຣີຊາຍ ຜູ້ນັ້ນແລ້ວຊົງປະທັບລົງ. [37]ແລະເບິ່ງແມ, ມີຍິງ
ຊົ່ວຄົນໜຶ່ງ ໃນ ເມືອງນັ້ນ ເມື່ອຮູ້ວ່າພຣະອົງ ຊົງ ນັ່ງ ສະເຫວີຍ ອາຫານ ໃນ ເຮືອນ ຂອງ ຟາຣີຊາຍ
ຍິງຜູ້ນັ້ນໄດ້ຖື ກະອອມຫີນຂາວມີນ້ຳມັນຫອມ. [38]ມາຢືນຂ້າງຫລັງໃກ້ພຣະບາດຂອງພຣະອົງ
ຮ້ອງໄຫ້ ນ້ຳຕາໄຫລຈົນປຽກບາດ ນາງຈຶ່ງເອົາຜົມເຊັດທັງຈູບພຣະບາດຂອງພຣະອົງແລະເອົາ
ນ້ຳມັນຫອມນັ້ນສົງ. [39]ຝ່າຍຄົນ ຟາຣີຊາຍ ຜູ້ເຊີນພຣະອົງມາ ເມື່ອເຫັນດັ່ງນັ້ນແລ້ວກໍນຶກໃນໃຈ
ວ່າ “ຖ້າຜູ້ນີ້ແມ່ນຜູ້ປະກາດພຣະທຳ ເພິ່ນຄົງຈະໄດ້ຮູ້ວ່າຍິງຜູ້ຖືກຕ້ອງກາຍຂອງເພິ່ນເປັນຜູ້ໃດ
ແລະເປັນຄົນແນວໃດ ເພາະມັນເປັນຄົນຊົ່ວ.” [40]ພຣະເຢຊູຊົງຕອບເພິ່ນວ່າ, “ຊີໂມນ ເອີຍ, ເຮົາ
ມີສິ່ງໜຶ່ງຈະເວົ້າກັບທ່ານ” ຊີໂມນ ທູນຕອບວ່າ, “ອາຈານເອີຍ, ເຊີນເວົ້າໂລດ.” [41]ພຣະອົງຊົງ
ກ່າວວ່າ, “ເຈົ້າໜີ້ຜູ້ໜຶ່ງມີລູກໜີ້ສອງຄົນ ຄົນໜຶ່ງເປັນໜີ້ເງິນຫ້າຮ້ອຍຫລຽນເດນາຣິອົນ ອີກຄົນ
ໜຶ່ງເປັນໜີ້ຫ້າສິບຫລຽນ. [42]ເມື່ອເຂົາບໍ່ມີອັນໃດຈະໃຊ້ໜີ້ແລ້ວ ເຈົ້າໜີ້ຈຶ່ງໂຜດຍົກໜີ້ໃຫ້ເຂົາທັງ
ສອງ ໃນສອງຄົນນັ້ນຄົນໃດຈະຮັກເຈົ້າໜີ້ຫລາຍກວ່າກັນ.” [43]ຊີໂມນ ທູນຕອບວ່າ, “ຂ້ານ້ອຍຄຶດ
ວ່າຄົນທີ່ເພິ່ນໄດ້ໂຜດຍົກໜີ້ໃຫ້ຫລາຍນັ້ນເປັນຜູ້ຮັກຫລາຍ” ພຣະອົງຊົງຕອບວ່າ, “ທ່ານຄຶດຖືກ
ແລ້ວ.” [44]ແລ້ວພຣະອົງຊົງຫລຽວໄປຫາຍິງນັ້ນ ແລະຊົງກ່າວກັບຊີໂມນ ວ່າ, “ທ່ານເຫັນຍິງຜູ້ນີ້ບໍ່
ເຮົາໄດ້ເຂົ້າມາໃນເຮືອນຂອງທ່ານ ທ່ານບໍ່ໄດ້ໃຫ້ນ້ຳລ້າງຕີນຂອງເຮົາ ແຕ່ຍິງຜູ້ນີ້ໄດ້ເອົານ້ຳຕາ
ລ້າງຕີນຂອງເຮົາ ແລະໄດ້ເອົາຜົມຂອງຕົນເຊັດ. [45]ທ່ານບໍ່ໄດ້ຈູບເຮົາ ແຕ່ຜູ້ຍິງນີ້ ຕັ້ງແຕ່ເຮົາ
ເຂົ້າມາລາວບໍ່ໄດ້ເຊົາຈູບຕີນຂອງເຮົາ. [46]ທ່ານບໍ່ໄດ້ເອົານ້ຳມັນທາຫົວຂອງເຮົາ ແຕ່ຍິງຜູ້ນີ້ໄດ້
ເອົານ້ຳມັນຫອມທາຕີນຂອງເຮົາ. [47]ເຫດສັນນັ້ນເຮົາບອກທ່ານວ່າ ຄວາມຜິດບາບຂອງຍິງນີ້ຊຶ່ງ
ມີຫລາຍນັ້ນໄດ້ໂຜດຍົກເສຍແລ້ວ ເພາະລາວຮັກຫລາຍ ແຕ່ຜູ້ທີ່ໄດ້ຮັບການຍົກໂທດໜ້ອຍກໍຮັກ
ໜ້ອຍ.” [48]ພຣະອົງຊົງກ່າວແກ່ຍິງນັ້ນວ່າ, “ຄວາມຜິດບາບຂອງເຈົ້າໂຜດຍົກເສຍແລ້ວ.” [49]ຝ່າຍ
ຄົນທັງຫລາຍທີ່ນັ່ງຮັບປະທານກັບພຣະອົງກໍຕັ້ງຄຶດໃນໃຈວ່າ, “ຜູ້ນີ້ແມ່ນໃຜ ຈຶ່ງໃຫ້ອະໄພຄວາມ

ຜິດບາບດັ່ງນັ້ນ.” [50]ພຣະອົງຊົງກ່າວກັບຍິງນັ້ນວ່າ, “ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າພົ້ນ
ຈົ່ງໄປເປັນສຸກເທີນ.”

# ບົດທີ 8

## ແມ່ຍິງບາງຄົນໄປກັບພຣະອົງ

[1]ຕໍ່ມາພຣະອົງໄດ້ສະເດັດໄປຕາມບ້ານຕາມເມືອງ ຊົງປະກາດຂ່າວປະເສີດເລື່ອງລາຊະອາ-
ນາຈັກຂອງພຣະເຈົ້າ ສາວົກສິບສອງຄົນນັ້ນກໍຢູ່ກັບພຣະອົງ. [2]ພ້ອມກັບແມ່ຍິງບາງຄົນທີ່ພົ້ນ
ຈາກຜີຮ້າຍແລ້ວ ແລະພົ້ນຈາກພະຍາດຕ່າງໆ ຄືມາຣີອາຜູ້ມີຊື່ອີກວ່າມັກດາລາ ຜູ້ທີ່ພຣະອົງ
ຊົງຂັບໄລ່ຜີເຈັດໂຕອອກ. [3]ແລະໂຢຮັນນາພັນລະຍາຂອງຈູຊາ ຜູ້ເປັນກົມວັງຂອງເຮໂຣດ,
ແລະນາງຊູຊັນນາ, ກັບຍິງອື່ນອີກຫລາຍຄົນທີ່ເຄີຍສະຫລະຊັບຂອງເຂົາບົວລະບັດພຣະອົງແລະ
ພວກຂອງພຣະອົງເໝືອນກັນ.

## ຄໍາອຸປະມາເລື່ອງຜູ້ຫວ່ານ

*(ມທ 13:1-9; ມຣກ 4:1-9)*

[4]ເມື່ອປະຊາຊົນຈໍານວນຫລວງຫລາຍໄດ້ມາຊຸມນຸມກັນຢູ່ ແລະມີຄົນກໍາລັງມາຫາພຣະອົງ
ຈາກເມືອງນັ້ນເມືອງນີ້ ພຣະອົງຈຶ່ງຊົງກ່າວກັບເຂົາເປັນຄໍາອຸປະມາວ່າ, [5]“ມີຄົນໜຶ່ງອອກໄປ
ຫວ່ານພືດຂອງຕົນ ເມື່ອກໍາລັງຫວ່ານຢູ່ນັ້ນ ລາງເມັດກໍຕົກຕາມທາງກໍຖືກຢຽບຢໍ່າ ແລະນົກປ່າ
ມາກິນເສຍ. [6]ລາງເມັດກໍຕົກໃສ່ບ່ອນມີຫີນ ແລະເມື່ອງອກຂຶ້ນແລ້ວກໍຫ່ຽວແຫ້ງລົງເພາະບ່ອນບໍ່
ຊຸ່ມ. [7]ລາງເມັດກໍຕົກກາງພຸ່ມໜາມ ໜາມກໍປົ່ງຂຶ້ນມານໍາ ແລ້ວປົກຫຸ້ມຮັດເສຍ. [8]ລາງເມັດກໍຕົກ
ໃສ່ດິນດີຈຶ່ງງອກຂຶ້ນເກີດຜົນຮ້ອຍຕໍ່” ເມື່ອພຣະອົງຊົງກ່າວດັ່ງນີ້ແລ້ວ ຈຶ່ງຊົງຮ້ອງຂຶ້ນວ່າ, “ຜູ້ໃດ
ມີຫູຢາກຟັງ ຈົ່ງຟັງເອົາ.”

## ຈຸດມຸ້ງໝາຍຂອງຄໍາອຸປະມາ

*(ມທ 13:10-17; ມຣກ 4:1-9)*

[9]ພວກສາວົກຈຶ່ງທູນຖາມພຣະອົງວ່າ, “ຄໍາອຸປະມານີ້ໝາຍຄວາມວ່າຢ່າງໃດ.” [10]ພຣະອົງຊົງ
ກ່າວວ່າ, “ຂໍ້ຄວາມລັບເລິກແຫ່ງລາຊະອານາຈັກຂອງພຣະເຈົ້າ ຊົງໂຜດໃຫ້ທ່ານທັງຫລາຍຮູ້
ໄດ້ ແຕ່ສໍາລັບຄົນອື່ນນັ້ນໄດ້ບອກໃຫ້ເປັນຄໍາອຸປະມາ ເພື່ອເມື່ອເຂົາເບິ່ງຈະບໍ່ເຫັນ, ແລະເມື່ອ
ເຂົາຟັງຈະບໍ່ເຂົ້າໃຈ.

## ຊົງອະທິບາຍເລື່ອງຜູ້ຫວ່ານ

*(ມທ 13:18-23; ມຣກ 4:13-20)*

[11]“ຄໍາອຸປະມານັ້ນກໍເປັນດັ່ງນີ້ ຄືເມັດພືດນັ້ນໄດ້ແກ່ພຣະທໍາຂອງພຣະເຈົ້າ. [12]ເມັດທີ່ຕົກຕາມ
ທາງໄດ້ແກ່ພວກຄົນທີ່ໄດ້ຍິນ ແລ້ວພະຍາມານມາຍາດເອົາພຣະທໍາໄປຈາກໃຈຂອງເຂົາ ເພື່ອບໍ່
ໃຫ້ເຊື່ອແລະພົ້ນໄດ້. [13]ເມັດທີ່ຕົກບ່ອນມີຫີນໄດ້ແກ່ຜູ້ທີ່ໄດ້ຍິນ ແລ້ວກໍຮັບພຣະທໍານັ້ນດ້ວຍ
ຄວາມຍິນດີແຕ່ບໍ່ມີຮາກ ເຊື່ອຢູ່ແຕ່ຊົ່ວຄາວເມື່ອຖືກທົດລອງເຂົາເລີກເສຍ. [14]ເມັດທີ່ຕົກກາງພຸ່ມ
ໜາມນັ້ນໄດ້ແກ່ພວກຄົນທີ່ໄດ້ຍິນ ແລ້ວອອກໄປຕາມທາງ ແລະຄວາມກັງວົນ, ກັບຊັບສົມບັດ,

ທັງຄວາມສະໜຸກຂອງຊີວິດນີ້ໄດ້ເຂົ້າມາຫຸ້ມຮັດພຣະທຳນັ້ນເສຍ ແລ້ວຜົນຂອງເຂົາຈຶ່ງບໍ່ທັນສຸກ.
[15]ເມັດທີ່ຕົກໃສ່ດິນດີນັ້ນໄດ້ແກ່ຜູ້ທີ່ໄດ້ຍິນພຣະທຳດ້ວຍໃຈເຫລື້ອມໃສສັດທາ ແລ້ວກໍຈົດຈຳໄວ້
ຈຶ່ງເກີດຜົນໂດຍ ຄວາມພຽນ."

## ຄຳອຸປະມາເລື່ອງໂຄມໄຟ

*(ມຣກ 4:21-25)*

[16]"ບໍ່ມີຜູ້ໃດ ເມື່ອໄຕ້ໂຄມແລ້ວຈະເອົາພາຊະນະປົກບັງໄວ້ ຫລືວາງໄວ້ໃຕ້ຕຽງນອນແຕ່ຕັ້ງໄວ້
ເທິງເຄື່ອງຮອງຕີນໂຄມ ເພື່ອຄົນທັງຫລາຍທີ່ເຂົ້າມາຈະໄດ້ເຫັນແສງສະຫວ່າງ. [17]ດ້ວຍວ່າບໍ່ມີ
ສິ່ງໃດທີ່ເຊື່ອງໄວ້ ຊຶ່ງຈະບໍ່ປະກົດແຈ້ງ ແລະບໍ່ມີສິ່ງໃດທີ່ປົກບັງໄວ້ຊຶ່ງຈະບໍ່ຮູ້ແລະບໍ່ເປີດເຜີຍ.
[18]ເຫດສັນນັ້ນທ່ານທັງຫລາຍໄດ້ຍິນຢ່າງໃດ ກໍຈົ່ງລະວັງໃຫ້ດີ ດ້ວຍວ່າຜູ້ໃດມີຢູ່ແລ້ວ ຈະຊົງ
ເພີ່ມເຕີມໃຫ້ແກ່ຜູ້ນັ້ນອີກ ແຕ່ຜູ້ໃດບໍ່ມີເຖິງແມ່ນວ່າສິ່ງທີ່ຕົນຄຶດວ່າມີຢູ່ນັ້ນ ຈະຊົງຍົກເອົາໄປ
ຈາກຜູ້ນັ້ນເສຍ."

## ມານດາແລະພວກນ້ອງຊາຍຂອງພຣະເຢຊູ

*(ມທ 12:46-50; ມຣກ 3:31-35)*

[19]ເມື່ອນັ້ນມານດາແລະພວກນ້ອງຊາຍຂອງພຣະອົງໄດ້ມາຫາ ແຕ່ເຂົ້າໄປເຖິງພຣະອົງບໍ່ໄດ້
ເພາະຄົນຫລາຍ. [20]ມີຄົນນຳຂ່າວມາທູນພຣະອົງວ່າ, "ມານດາແລະພວກນ້ອງຊາຍທ່ານຢືນຢູ່
ຂ້າງນອກຢາກມາຫາ." [21]ແຕ່ພຣະອົງຊົງຕອບເຂົາວ່າ, "ມານດາແລະນ້ອງຂອງເຮົານັ້ນ ຄືຄົນ
ທີ່ໄດ້ຍິນພຣະທຳຂອງ ພຣະເຈົ້າ ແລະເຮັດຕາມ.

## ພຣະເຢຊູຊົງຫ້າມລົມຍຸ

*(ມທ 8:23-27; ມຣກ 4:23-41)*

[22]ຢູ່ມາວັນໜຶ່ງພຣະອົງໄດ້ສະເດັດລົງເຮືອ ແລ້ວຊົງກ່າວກັບເຂົາວ່າ, "ເຮົາຈົ່ງພາກັນຂ້າມ
ທະເລສາບໄປຟາກນັ້ນເທາະ" ແລ້ວເຂົາກໍຖອຍເຮືອອອກໄປ. [23]ເມື່ອກຳລັງຂ້າມໄປພຣະອົງ
ບັນທົມຫລັບ ແລະເກີດມີລົມພະຍຸພັດລົງມາກາງທະເລ, ນ້ຳກໍເຂົ້າເຮືອຢູ່, ໜ້າຢ້ານຈະເປັນອັນ-
ຕະລາຍ. [24]ພວກສາວົກຈຶ່ງມາປຸກພຣະອົງທູນວ່າ, "ອາຈານ, ອາຈານເຈົ້າເອີຍ, ພວກຂ້ານ້ອຍ
ກຳລັງຈະຈິບຫາຍຢູ່ແລ້ວ" ພຣະອົງຈຶ່ງຊົງຕື່ນຂຶ້ນຫ້າມລົມແລະຟອງນ້ຳ ລົມແລະຟອງນ້ຳກໍຢຸດ
ສະຫງົບງຽບທົ່ວໄປທັນທີ. [25]ພຣະອົງຊົງກ່າວກັບເຂົາວ່າ, "ຄວາມເຊື່ອຂອງພວກທ່ານຢູ່ໃສ?"
ເຂົາກໍຢ້ານແລະປະຫລາດໃຈຈຶ່ງເວົ້າກັນວ່າ, "ທ່ານຜູ້ນີ້ແມ່ນຜູ້ໃດໜໍ ຈຶ່ງຫ້າມທັງລົມແລະນ້ຳ
ແລະລົມກັບນ້ຳກໍຍອມຟັງເພິ່ນ."

## ຊົງໂຜດຄົນຜີສິງທີ່ເຂດແດນເຄຣາຊາ

*(ມທ 8:28-34; ມຣກ 5:1-20)*

[26]ແລ້ວເຂົາໄດ້ໄປຈອດທີ່ເຂດແດນຂອງຊາວ ເຄຣາຊາ ຊຶ່ງຢູ່ກົງກັນຂ້າມກັບແຂວງ ຄາລີເລ.
[27]ເມື່ອພຣະອົງສະເດັດຂຶ້ນບົກແລ້ວມີຊາຍຄົນໜຶ່ງແຕ່ເມືອງນັ້ນມາພົບພຣະອົງ ຄົນຜູ້ນັ້ນມີຜີຮ້າຍ
ຫລາຍໂຕສິງຢູ່ ລາວບໍ່ໄດ້ນຸ່ງເຄື່ອງແລະບໍ່ໄດ້ຢູ່ໃນເຮືອນເປັນເວລາເຖິງແລ້ວ ແຕ່ຢູ່ຕາມອຸບໂມງ
ຝັງສົບ. [28]ເມື່ອຄົນນັ້ນໄດ້ເຫັນ ພຣະເຢຊູກໍຮ້ອງຂຶ້ນ ແລ້ວຂາບລົງຕໍ່ພຣະພັກພຣະອົງອອກສຽງ

ດັ່ງທູນວ່າ. "ເຢຊູບຸດຂອງພຣະເຈົ້າຜູ້ສູງສຸດເອີຍ, ທ່ານມາຫຍຸ້ງກ່ຽວກັບເຮົາດ້ວຍເຫດໃດ ຂໍ
ຢ່າໄດ້ທໍລະມານເຮົາທ້ອນ!" 29ມັນເວົ້າດັ່ງນັ້ນກໍເພາະພຣະອົງໄດ້ຊົງສັ່ງຜີຖ່ອຍຮ້າຍໃຫ້ອອກ
ຈາກຄົນນັ້ນ (ດ້ວຍວ່າຜີນັ້ນໄດ້ມາກຸມເອົາຄົນນັ້ນໄປຫລາຍເທື່ອຫລາຍທີ່ແລະເຄີຍມັດດ້ວຍຊືກ
ແລະຖືກລ່າມໂສ້ຂັງໄວ້ ແຕ່ມັນກໍຫັກເຄື່ອງມັດນັ້ນເສຍແລ້ວໄດ້ບັງຄັບໃຫ້ເຂົ້າໄປໃນປ່າ).
30ຝ່າຍພຣະເຢຊູຊົງຖາມມັນວ່າ, "ມຶງຊື່ຫຍັງ?" ມັນທູນຕອບວ່າ, "ຊື່ກອງທັບ" ດ້ວຍວ່າຜີທີ່ເຂົ້າ
ສິງຢູ່ນັ້ນມີຫລາຍໂຕ. 31ແລະຜີນັ້ນໄດ້ອ້ອນວອນຂໍນຳພຣະອົງບໍ່ໃຫ້ບັງຄັບມັນໜີໄປພື້ນເຫວເລິກ.
32ທີ່ນັ້ນມີໝູຝູງໃຫຍ່ກຳລັງຫາກິນຢູ່ຕາມພູ ຜີເຫລົ່ານັ້ນໄດ້ທູນຂໍພຣະອົງຊົງອະນຸຍາດໃຫ້ພວກ
ມັນເຂົ້າສິງຢູ່ໃນໝູຝູງນັ້ນ ພຣະອົງກໍຊົງອະນຸຍາດໃຫ້. 33ຜີເຫລົ່ານັ້ນຈຶ່ງໄດ້ອອກມາຈາກຄົນ
ນັ້ນແລ້ວເຂົ້າໄປສິງຢູ່ໃນຝູງໝູ ໝູທັງປວງກໍຟ້າວແລ່ນລົງຈາກຕາຫລິ່ງຊັນ ໂຕນໃສ່ທະເລສາບ
ຈົມນ້ຳຕາຍທັນທີ. 34ຝ່າຍຄົນລ້ຽງໝູເມື່ອເຫັນເຫດການທີ່ເກີດຂຶ້ນນັ້ນ ຕ່າງຄົນຕ່າງໜີໄປເລົ່າ
ເລື່ອງນັ້ນທັງໃນເມືອງແລະນອກເມືອງ. 35ແລ້ວຄົນທັງປວງກໍອອກມາເບິ່ງເຫດການທີ່ເກີດຂຶ້ນ
ນັ້ນ ແລະເມື່ອມາເຖິງພຣະເຢຊູ ເຂົາໄດ້ເຫັນຄົນທີ່ຜີຮ້າຍອອກຈາກຕົວນຸ່ງຫົ່ມເສື້ອຜ້າມີສະຕິ
ອາລົມດີ ນັ່ງຢູ່ໃກ້ພຣະບາດເຢຊູ ເຂົາຈຶ່ງມີໃຈຢ້ານ. 36ຝ່າຍຄົນທີ່ເຫັນເຫດການນັ້ນ ກໍໄດ້ເລົ່າ
ໃຫ້ເຂົາຟັງເຖິງເລື່ອງ ຄົນທີ່ຜີຮ້າຍເຂົ້າສິງນັ້ນໄດ້ດີປົກກະຕິຢ່າງໃດ. 37ຊາວເມືອງເຄຣາຊາກັບ
ປະຊາຊົນທັງປວງໃນທົ່ວຮອບເຂດນັ້ນໄດ້ອ້ອນວອນຂໍໃຫ້ພຣະອົງໜີໄປຈາກເຂົາເສຍ ເພາະ
ຄວາມຢ້ານອັນໃຫຍ່ໄດ້ຕົກໃສ່ເຂົາ ພຣະອົງຈຶ່ງສະເດັດລົງເຮືອກັບຄືນໄປ. 38ຄົນທີ່ມີຜີຮ້າຍອອກ
ຈາກຕົວນັ້ນໄດ້ອ້ອນວອນຂໍຢູ່ນຳພຣະອົງ ແຕ່ພຣະອົງຊົງບອກໃຫ້ໄປໂດຍຊົງສັ່ງວ່າ. 39"ຈົ່ງກັບ
ໄປບ້ານເຮືອນຂອງເຈົ້າ ແລະເລົ່າເລື່ອງການໃຫຍ່ທີ່ພຣະເຈົ້າໄດ້ຊົງກະທຳແກ່ເຈົ້ານັ້ນ" ແລ້ວ
ຄົນນັ້ນກໍກັບໄປປະກາດແກ່ຄົນທັງປວງ ເຖິງເຫດການທຸກສິ່ງທີ່ພຣະເຢຊູໄດ້ຊົງກະທຳແກ່ຕົນ.

## ເລື່ອງລູກສາວເຈົ້ານາຍແລະຍິງເລືອດຕົກ

*(ມທ 9:18-26; ມຣກ 5:21-43)*

40ເມື່ອພຣະເຢຊູສະເດັດກັບມາແລ້ວປະຊາຊົນກໍໄດ້ຕ້ອນຮັບພຣະອົງ ເພາະເຂົາທັງຫລາຍ
ຄອຍຖ້າພຣະອົງຢູ່. 41ແລະເບິ່ງແມ! ມີຊາຍຄົນໜຶ່ງຊື່ຢາອີໂຣ ເປັນນາຍໂຮງທຳມະເທດສະໜາ
ມາຂາບລົງທີ່ພຣະບາດຂອງພຣະເຢຊູ ອ້ອນວອນຂໍໃຫ້ພຣະອົງສະເດັດເຂົ້າໄປໃນເຮືອນຂອງ
ຕົນ. 42ເພາະວ່າເພິ່ນມີລູກສາວຄົນດຽວອາຍຸປະມານສິບສອງປີ ລູກນັ້ນກຳລັງຈະຕາຍໄປ.

43ໃນຂະນະທີ່ພຣະອົງສະເດັດໄປນັ້ນ ປະຊາຊົນໄດ້ກີດຂວາງພຣະອົງ ມີຍິງຄົນໜຶ່ງເປັນພະ-
ຍາດເລືອດຕົກໄດ້ສິບສອງປີມາແລ້ວ ນາງໄດ້ຈ່າຍຊັບຂອງຕົນໃຫ້ພວກໝໍຈົນໝົດແຕ່ບໍ່ມີໝໍຄົນ
ໃດອາດໃຫ້ດີພະຍາດໄດ້. 44ນາງໄດ້ຫຍັບເຂົ້າມາເບື້ອງຫລັງພຣະເຢຊູແລະບາຍແຄມເຄື່ອງທົງ
ຂອງພຣະອົງ ໃນທັນໃດນັ້ນເລືອດທີ່ໄຫລກໍຕຸດ. 45ພຣະເຢຊູຊົງຖາມວ່າ, "ແມ່ນໃຜໄດ້ບາຍ
ເຮົາ?" ເມື່ອຄົນທັງປວງໄດ້ຕອບປະຕິເສດເປໂຕກັບພວກຄົນທີ່ຢູ່ນຳກັນໄດ້ທູນວ່າ, "ອາຈານ
ເຈົ້າເອີຍ, ກໍແມ່ນປະຊາຊົນທີ່ກຳລັງກີດຂວາງແລະບຽດທ່ານຢູ່." 46ແຕ່ພຣະເຢຊູຊົງຕອບວ່າ,
"ມີຜູ້ໜຶ່ງໄດ້ບາຍເຮົາ ເພາະເຮົາຮູ້ສຶກວ່າລິດໄດ້ອອກຈາກເຮົາໄປ." 47ເມື່ອເຫັນວ່າຈະເຊື່ອງຕົວບໍ່
ໄດ້ແລ້ວ ນາງກໍເຂົ້າມາດ້ວຍຕົວສັ່ນຂາບລົງຕໍ່ພຣະພັກຂອງພຣະອົງຕໍ່ໜ້າຄົນທັງປວງ ທູນເຖິງ

ເຫດການທີ່ຕົນໄດ້ບາຍພຣະອົງ ແລະບອກເຖິງເລື່ອງທີ່ຕົນໄດ້ດີພະຍາດທັນທີນັ້ນເໝືອນກັນ.
48ພຣະອົງຊົງກ່າວກັບນາງວ່າ, "ລູກຍິງເອີຍ, ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ ຈົ່ງໄປ
ເປັນສຸກເທີນ!".

49ໃນຂະນະທີ່ພຣະອົງຊົງກ່າວຢູ່ນັ້ນ ມີຄົນໜຶ່ງມາແຕ່ເຮືອນຂອງນາຍໂຮງທຳບອກວ່າ, "ລູກ
ຂອງນາຍຕາຍແລ້ວ ຂໍຢ່າໄດ້ລົບກວນອາຈານຕໍ່ໄປ." 50ຝ່າຍພຣະເຢຊູ ເມື່ອໄດ້ຍິນກໍຊົງກ່າວ
ແກ່ນາຍນັ້ນວ່າ, "ຢ່າວິຕົກເທາະ ຈົ່ງເຊື່ອເທົ່ານັ້ນ ແລະລູກຈະໄດ້ລອດພົ້ນ." 51ເມື່ອສະເດັດ
ເຖິງເຮືອນແລ້ວ ພຣະອົງບໍ່ໄດ້ຊົງອະນຸຍາດໃຫ້ຜູ້ໃດເຂົ້າໄປນຳ ເວັ້ນແຕ່ເປໂຕ, ໂຢຮັນ, ຢາໂກ-
ໂບ, ແລະພໍ່ແມ່ຂອງເດັກນ້ອຍນັ້ນ. 52ຄົນທັງຫລາຍກໍຕີອົກຮ້ອງໄຫ້ຮ່ຳໄຮເພາະເດັກນ້ອຍນັ້ນ
ແຕ່ພຣະອົງຊົງບອກວ່າ, "ຢ່າຮ້ອງໄຫ້ເທາະ ເດັກນ້ອຍນັ້ນບໍ່ຕາຍດອກ ແຕ່ຫລັບຢູ່ເທົ່ານັ້ນ."
53ແລ້ວເຂົາພາກັນຫົວຂວັນພຣະອົງ ເພາະເຂົາຮູ້ວ່າເດັກນ້ອຍນັ້ນຕາຍແລ້ວ. 54ຝ່າຍພຣະອົງຊົງ
ຈັບມືເດັກນ້ອຍ ແລ້ວຊົງຮ້ອງວ່າ, "ລູກເອີຍ, ຈົ່ງລຸກຂຶ້ນແມ!". 55ແລະຈິດວິນຍານກໍກັບເຂົ້າໃນ
ຕົວເດັກນ້ອຍນັ້ນ ມັນໄດ້ລຸກຂຶ້ນທັນທີ ພຣະອົງຈຶ່ງຊົງສັ່ງໃຫ້ເອົາອາຫານມາໃຫ້ມັນກິນ. 56ຝ່າຍ
ພໍ່ແມ່ຂອງເດັກນ້ອຍນັ້ນກໍງຶດອັດສະຈັນໃຈຫລາຍ ແຕ່ພຣະອົງຊົງຫ້າມເຂົາບໍ່ໃຫ້ບອກຜູ້ໃດຮູ້
ເຫດການຊຶ່ງເປັນມານັ້ນ.

# ບົດທີ 9

## ຊົງໃຊ້ສາວົກສິບສອງຄົນອອກໄປປະກາດ

*(ມທ 10:5:15; ມຣກ 6:7-13)*

1ເມື່ອພຣະອົງຊົງເອີ້ນພວກສິບສອງຄົນນັ້ນມາພ້ອມກັນແລ້ວ ກໍຊົງປະທານໃຫ້ເຂົາມີລິດແລະ
ມີອຳນາດເໜືອຜີຮ້າຍທັງປວງ ແລະເພື່ອຈະໄດ້ເຮັດໃຫ້ດີພະຍາດຕ່າງໆ. 2ແລ້ວພຣະອົງຊົງໃຊ້
ເຂົາໃຫ້ອອກໄປປະກາດລາຊະອານາຈັກຂອງພຣະເຈົ້າ ແລະເຮັດໃຫ້ຄົນເຈັບປ່ວຍດີພະຍາດ.
3ພຣະອົງຈຶ່ງຊົງສັ່ງເຂົາວ່າ, "ຢ່າເອົາສິ່ງໃດໄປໃຊ້ຕາມທາງ ຄື ຢ່າເອົາໄມ້ຄ້ອນເທົ້າ, ຫລືຖົງ,
ຫລືອາຫານ, ຫລືເງິນ, ຫລືເສື້ອສອງໂຕ. 4ແລະຖ້າເຂົາໄປໃນເຮືອນຫລັງໃດ ກໍໃຫ້ອາໃສຢູ່ໃນ
ເຮືອນຫລັງນັ້ນຈົນກວ່າຈະຈາກໄປ. 5ຖ້າຜູ້ໃດບໍ່ຕ້ອນຮັບພວກທ່ານ ຈົ່ງອອກຈາກເມືອງນັ້ນໄປ
ແລະຈົ່ງສັ່ນຂີ້ຝຸ່ນທີ່ຕິດຕີນຂອງພວກທ່ານອອກເສຍ ເພື່ອເປັນພະຍານຕໍ່ເຂົາ." 6ແລ້ວພວກສາ-
ວົກກໍພາກັນອອກໄປປະກາດຂ່າວປະເສີດຕາມບ້ານເມືອງຕ່າງໆ ແລະໄດ້ເຮັດໃຫ້ຄົນເຈັບປ່ວຍ
ທົ່ວທຸກບ່ອນດີພະຍາດ.

## ຄວາມສົງໃສຂອງເຮໂຣດ

*(ມທ 14:1-12; ມຣກ 6:14-29)*

7ຝ່າຍເຮໂຣດຜູ້ປົກຄອງໄດ້ຍິນເລື່ອງເຫດການທັງປວງຊຶ່ງເກີດຂຶ້ນນັ້ນ ຈຶ່ງຫຍຸ້ງໃຈສົງໃສ
ຫລາຍ ເພາະລາງຄົນເວົ້າວ່າ, "ໂຢຮັນເປັນຄືນມາຈາກຕາຍແລ້ວ." 8ລາງຄົນວ່າ, "ເປັນເອລີ-
ຢາມາປະກົດ" ຄົນອື່ນກໍວ່າ, "ເປັນຜູ້ປະກາດພຣະທຳແຕ່ເຊັ່ນບູຮານກັບເປັນຄືນມາອີກ." 9ເຮ-
ໂຣດຈຶ່ງກ່າວວ່າ, "ໂຢຮັນນັ້ນເຮົາໄດ້ຕັດຫົວແລ້ວ ແຕ່ຄົນຜູ້ທີ່ເຮົາໄດ້ຍິນຂ່າວນີ້ແມ່ນຜູ້ໃດໜໍ?"

ແລ້ວ ເຮໂຣດ ໄດ້ຫາໂອກາດທີ່ຈະພົບພຣະອົງ.

## ຊົງລ້ຽງຫ້າພັນຄົນ

*(ມທ 14:13-21; ມຣກ 6:30-44; ຢຮ 6:1-14)*

[10]ເມື່ອອັກຄະສາວົກກັບຄືນມາແລ້ວ ເຂົາກໍທູນພຣະອົງເຖິງບັນດາການທີ່ເຂົາໄດ້ເຮັດນັ້ນ
ແລະພຣະອົງຊົງພາເຂົາແຕ່ໝູ່ດຽວອອກໄປເຖິງເມືອງໜຶ່ງ ຊື່ເບັດຊາອີດາ. [11]ແຕ່ເມື່ອປະຊາຊົນ
ຮູ້ຈັກ ເຂົາກໍຕາມໄປຫາພຣະອົງ ສ່ວນພຣະອົງກໍຊົງຕ້ອນຮັບເຂົາແລະຊົງບອກເຂົາເຖິງລາຊະ
ແຜ່ນດິນຂອງເຈົ້າ ແລະທຸກຄົນທີ່ຕ້ອງການຢາກດີພະຍາດພຣະອົງກໍຊົງໂຜດໃຫ້ດີ. [12]ຄັນຕາ-
ເວັນກຳລັງຈະຕົກ ພວກສິບສອງຄົນນັ້ນໄດ້ມາທູນພຣະອົງວ່າ, “ຂໍໃຫ້ປະຊາຊົນເລີກໄປຕາມ
ບ້ານໄຮ່ບ້ານນາໃນແຖບນີ້ເພື່ອຫາບ່ອນພັກນອນແລະຊື້ອາຫານກິນ ເພາະບ່ອນນີ້ຢູ່ກາງປ່າ.”
[13]ແຕ່ພຣະອົງຊົງຕອບເຂົາວ່າ, “ພວກທ່ານຈົ່ງລ້ຽງເຂົາສາ!” ພວກສາວົກຈຶ່ງທູນວ່າ, “ພວກຂ້າ-
ນ້ອຍບໍ່ມີຫຍັງນອກຈາກເຂົ້າຈີ່ຫ້າກ້ອນແລະປາສອງໂຕເທົ່ານັ້ນ ເວັ້ນແຕ່ພວກຂ້ານ້ອຍຈະໄປຊື້
ອາຫານສຳລັບຄົນທັງປວງນີ້.” [14]ເພາະວ່າຄົນເຫລົ່ານັ້ນແຕ່ຜູ້ຊາຍມີປະມານຫ້າພັນຄົນ ແລ້ວອົງ
ຊົງສັ່ງພວກສາວົກວ່າ, “ຈົ່ງໃຫ້ຄົນທັງປວງນັ່ງລົງເປັນໝູ່ ໝູ່ລະຫ້າສິບຄົນ.” [15]ເຂົາກໍເຮັດຕາມ
ຄືໄດ້ໃຫ້ຄົນທັງປວງນັ່ງລົງ.

[16]ເມື່ອພຣະອົງຊົງຮັບເອົາເຂົ້າຈີ່ຫ້າກ້ອນແລະປາສອງໂຕນັ້ນແລ້ວ ກໍຊົງເງີຍພຣະພັກເບິ່ງຟ້າ
ຂໍພຣະພອນ ແລະຊົງຫັກເຂົ້າຈີ່ນັ້ນຍື່ນໃຫ້ພວກສາວົກເພື່ອແຈກໃຫ້ແກ່ຄົນທັງປວງ. [17]ເຂົາກໍກິນ
ອີ່ມທຸກຄົນ ສ່ວນຕ່ອນຫັກທີ່ເຫລືອນັ້ນກໍເກັບໄດ້ສິບສອງບຸງ.

## ເປໂຕກ່າວວ່າພຣະເຢຊູຊົງເປັນພຣະຄຣິດ

*(ມທ 16:13-19; ມຣກ 8:27-29)*

[18]ຢູ່ມາເມື່ອພຣະອົງກຳລັງໄຫວ້ວອນຢູ່ໃນບ່ອນຕ່າງຫາກ ມີແຕ່ພວກສາວົກຢູ່ນຳພຣະອົງຊົງ
ຖາມເຂົາວ່າ, “ປະຊາຊົນເວົ້າກັນວ່າເຮົາແມ່ນຜູ້ໃດ?”. [19]ພວກສາວົກທູນຕອບວ່າ, “ເຂົາວ່າແມ່ນ
ໂຢຮັນບັບຕິສະໂຕ, ລາງຄົນວ່າ ແມ່ນເອລີຢາ, ແຕ່ຄົນອື່ນວ່າແມ່ນຜູ້ປະກາດພຣະທຳແຕ່ເຊັ່ນ
ບູຮານກັບເປັນຄືນມາອີກ.” [20]ແລ້ວພຣະອົງຊົງຖາມເຂົາວ່າ, “ຝ່າຍພວກທ່ານເດ ວ່າເຮົາແມ່ນ
ໃຜ?” ເປໂຕທູນຕອບວ່າ, “ແມ່ນພຣະຄຣິດມາແຕ່ພຣະເຈົ້າ.”

## ຊົງທຳນວາຍເຖິງມໍລະນະພາບຂອງພຣະອົງ

*(ມທ 16:20-28; ມຣກ 8:30– 9:1)*

[21]ພຣະອົງຈຶ່ງຊົງສັ່ງຫ້າມເຂົາຢ່າງແຂງແຮງ ບໍ່ໃຫ້ບອກຄວາມນີ້ແກ່ຜູ້ໃດ. [22]ແລ້ວຊົງກ່າວ
ວ່າ, “ບຸດມະນຸດຈະຕ້ອງທົນທຸກທໍລະມານຫລາຍປະການ ພວກເຖົ້າແກ່ກັບພວກປະໂລຫິດຕົນ
ໃຫຍ່ແລະພວກນັກທຳຈະບໍ່ຍອມຮັບເພິ່ນ ເຂົາຈະໄດ້ຂ້າເພິ່ນເສຍ ແລ້ວໃນວັນຖ້ວນສາມເພິ່ນຈະ
ຖືກຊົງບັນດານໃຫ້ຄືນມາອີກ.”

[23]ແລະພຣະອົງຊົງກ່າວກັບຄົນທັງຫລາຍວ່າ, “ຖ້າຜູ້ໃດຈະຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງ
ຕົນເສຍແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິດຕາມເຮົາມາ. [24]ເພາະວ່າຜູ້ໃດຢາກ
ຊ່ອຍຊີວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສຍຊີວິດ ແຕ່ຜູ້ໃດຈະເສຍຊີວິດຂອງຕົນເພາະເຫັນແກ່ເຮົາ

ຜູ້ນັ້ນກໍຈະມີຊີວິດພົ້ນ. 25ເຫດວ່າຖ້າຜູ້ໃດຈະໄດ້ສິ່ງຂອງໝົດທັງໂລກ ແຕ່ຈະເຮັດໃຫ້ຕົວເອງຈິບ-
ຫາຍ ຫລືເສຍໄປ ຜູ້ນັ້ນຈະໄດ້ປະໂຫຍດອັນໃດ. 26ດ້ວຍວ່າຖ້າຜູ້ໃດມີຄວາມລະອາຍເພາະເຮົາ
ແລະເພາະຖ້ອຍຄຳຂອງເຮົາ ບຸດມະນຸດກໍຈະມີຄວາມລະອາຍເພາະຜູ້ນັ້ນ ເມື່ອເພິ່ນມາດ້ວຍສະ-
ຫງ່າລາສີຂອງຕົນ, ຂອງພຣະບິດາ ແລະຂອງພວກເທວະດາບໍລິສຸດ. 27ແຕ່ເຮົາບອກທ່ານທັງ-
ຫລາຍຕາມຄວາມຈິງວ່າ ມີລາງຄົນທີ່ຢືນຢູ່ທີ່ນີ້ຈະບໍ່ຮູ້ລົດຄວາມຕາຍຈົນກວ່າຈະໄດ້ເຫັນລາຊະ
ອານາຈັກຂອງພຣະເຈົ້າ."

## ຊົງປ່ຽນລັກສະນະ

*(ມທ 17:1-8; ມຣກ 9:2-8)*

28ພາຍຫລັງພຣະອົງຊົງກ່າວຄຳເຫລົ່ານີ້ແລ້ວປະມານແປດວັນ ພຣະອົງໄດ້ຊົງພາເປໂຕ, ໂຢ-
ຮັນ, ແລະຢາໂກໂບຂຶ້ນໄປເທິງພູເພື່ອໄຫວ້ວອນ. 29ເມື່ອພຣະອົງກຳລັງຊົງໄຫວ້ວອນຢູ່ນັ້ນ
ວັນນະພຣະພັກຂອງພຣະອົງກໍປ່ຽນໄປ ແລະເຄື່ອງທົງຂອງພຣະອົງກໍຂາວເຫລື້ອມ. 30ແລະເບິ່ງ
ແມ! ມີສອງຄົນເຝົ້າສົນທະນາຢູ່ກັບພຣະອົງ ຄືໂມເຊແລະເອລີຢາ. 31ຜູ້ມາປະກົດດ້ວຍລັດສະ-
ໝີ ແລະກ່າວເຖິງການທີ່ພຣະອົງຈະສະເດັດຈາກໂລກໄປ ຊຶ່ງຈະສຳເລັດໃນກຸງເຢຣູຊາເລັມ.
32ຝ່າຍເປໂຕກັບໝູ່ຂອງຕົນກໍເຫງົານອນ ແລະເມື່ອຕາຂອງເຂົາສະຫວ່າງຂຶ້ນແລ້ວ ເຂົາກໍໄດ້
ເຫັນພຣະລັດສະໝີຂອງພຣະອົງ ແລະເຫັນສອງຄົນນັ້ນທີ່ຢືນຢູ່ກັບພຣະອົງ. 33ເມື່ອສອງຄົນນັ້ນ
ກຳລັງລາຈາກພຣະອົງໄປ ເປໂຕໄດ້ທູນພຣະເຢຊູວ່າ, "ອາຈານເຈົ້າເອີຍ, ຊຶ່ງພວກຂ້ານ້ອຍຢູ່ທີ່
ນີ້ກໍດີຢູ່ ໃຫ້ພວກຂ້ານ້ອຍພາກັນປຸກຕູບສາມຫລັງ ສຳລັບທ່ານຫລັງໜຶ່ງ, ສຳລັບໂມເຊຫລັງ
ໜຶ່ງ, ແລະຫລັງໜຶ່ງສຳລັບເອລີຢາ" ເປໂຕບໍ່ຮູ້ສຶກຕົວວ່າຕົນກຳລັງເວົ້າຫຍັງ. 34ເມື່ອເປໂຕຍັງ
ຊົງກ່າວຄຳເຫລົ່ານີ້ຢູ່ ມີເມກມາປົກຫຸ້ມເຂົາໄວ້ ເມື່ອຢູ່ໃນເມກນັ້ນເຂົາກໍຢ້ານ. 35ແລະມີພຣະສຸ-
ລະສຽງອອກມາຈາກເມກນັ້ນວ່າ, "ທ່ານຜູ້ນີ້ແຫລະ, ເປັນບຸດຂອງເຮົາທີ່ເຮົາເລືອກໄວ້ ຈົ່ງເຊື່ອ
ຟັງທ່ານ." 36ເມື່ອພຣະສຸລະສຽງນັ້ນສະຫງົບລົງແລ້ວ ກໍມີແຕ່ພຣະເຢຊູຜູ້ດຽວຊົງສະຖິດຢູ່ຫັ້ນ
ສ່ວນເຂົາທັງສາມກໍມິດຢູ່ ໃນຄາວນັ້ນເຂົາບໍ່ໄດ້ບອກເຫດການທີ່ເຂົາໄດ້ເຫັນນັ້ນຈັກຢ່າງໃຫ້ຜູ້ໃດ
ຟັງ.

## ຊົງໂຜດເດັກນ້ອຍຜູ້ມີຜີສິງ

*(ມທ 17:14-18; ມຣກ 9:14-27)*

37ວັນໜ້າມາ, ເມື່ອພຣະອົງສະເດັດພ້ອມກັບພວກສາວົກລົງມາຈາກພູແລ້ວ ປະຊາຊົນຈຳ-
ນວນຫລາຍໄດ້ມາພົບພຣະອົງ. 38ແລະດັ່ງນີ້, ມີຊາຍຄົນໜຶ່ງໃນໝູ່ປະຊາຊົນນັ້ນຮ້ອງຂຶ້ນວ່າ,
"ອາຈານເອີຍ, ຂໍໂຜດເບິ່ງລູກຊາຍຂ້ານ້ອຍແດ່ທ້ອນ ເພາະຂ້ານ້ອຍມີແຕ່ລູກຄົນດຽວ. 39ເບິ່ງ
ແມ! ມີຜີຮ້າຍກຸມຕົວເດັກນ້ອຍ ມັນກໍຮ້ອງຂຶ້ນທັນທີ, ເຮັດໃຫ້ເດັກນ້ອຍຊັກດີ້ນ, ນ້ຳລາຍຟູມ
ປາກ, ແລະໃຫ້ຕົວເດັກນ້ອຍຟົກຊ້ຳໄປ ແລ້ວອອກມາຈາກມັນບໍ່ໄດ້ງ່າຍ. 40ຂ້ານ້ອຍໄດ້ຂໍໃຫ້
ພວກສາວົກຂອງທ່ານຂັບໄລ່ຜີນັ້ນອອກເສຍ ແຕ່ເຂົາເຮັດບໍ່ໄດ້." 41ພຣະເຢຊູຊົງຕອບວ່າ, "ໂອ
ຄົນໃນສະໄໝທີ່ຂາດຄວາມເຊື່ອ ແລະຊົ່ວຊ້າເອີຍ, ເຮົາຈະຕ້ອງຢູ່ກັບເຈົ້າທັງຫລາຍແລະອົດທົນ
ກັບພວກເຈົ້າເທິງປານໃດ ຈົ່ງພາລູກຂອງທ່ານມານີ້ສາ!". 42ເມື່ອເດັກນ້ອຍນັ້ນກຳລັງມາ ຜີໄດ້

ເຮັດໃຫ້ມັນລົ້ມກິ້ງເກືອກໄປມາ ແຕ່ພຣະເຢຊູຊົງກ່າວຊຳລະຜີຖ່ອຍຮ້າຍນັ້ນ ແລະຊົງເຮັດໃຫ້
ເດັກນ້ອຍດີແລ້ວສົ່ງຄືນໃຫ້ພໍ່ມັນ. 43ແລະຄົນທັງປວງກໍງຶດປະຫລາດໃຈດ້ວຍອານຸພາບອັນໃຫຍ່
ຂອງພຣະເຈົ້າ.

## ຊົງທຳນວາຍອີກເຖິງມໍລະນະພາບຂອງພຣະອົງ

*(ມທ 17:22-23; ມຣກ 9:30-32)*

ແຕ່ເມື່ອເຂົາທັງຫລາຍຍັງປະຫລາດໃຈຢູ່ດ້ວຍເຫດການທັງປວງທີ່ພຣະເຢຊູຊົງກະທຳນັ້ນ
ພຣະອົງຈຶ່ງຊົງກ່າວກັບພວກສາວົກຂອງຕົນວ່າ, 44"ທ່ານທັງຫລາຍຈົ່ງໃຫ້ຄຳເຫລົ່ານີ້ເຂົ້າໃນຫູ
ຂອງທ່ານ ເພາະວ່າບຸດມະນຸດຈະຕ້ອງຖືກມອບໄວ້ໃນມືມະນຸດ." 45ແຕ່ຖ້ອຍຄຳເຫລົ່ານັ້ນພວກ
ສາວົກບໍ່ໄດ້ເຂົ້າໃຈ ເພາະຖືກຊົງບັງໄວ້ຈາກເຂົາ ເພື່ອເຂົາຈະບໍ່ສັງເກດຮູ້ໄດ້ ແລະເຂົາບໍ່ກ້າ
ຖາມພຣະອົງເຖິງຄຳນັ້ນ.

## ໃຜເປັນໃຫຍ່

*(ມທ 18:1-5; ມຣກ 9:33-37)*

46ແລ້ວໄດ້ເກີດການຖົກຖຽງກັນຂຶ້ນໃນລະຫວ່າງພວກສາວົກ ວ່າໃຜຈະເປັນໃຫຍ່ກວ່າໝູ່.
47ຝ່າຍພຣະເຢຊູຊົງຊາບຄວາມຄຶດໃນໃຈຂອງເຂົາ ຈຶ່ງຊົງໃຫ້ເດັກນ້ອຍຄົນໜຶ່ງມາຢືນຢູ່ໃກ້
ພຣະອົງ. 48ແລ້ວຊົງກ່າວກັບເຂົາວ່າ, "ຖ້າຜູ້ໃດຈະຮັບເອົາເດັກນ້ອຍຄົນນີ້ໃນນາມຂອງເຮົາ ຜູ້
ນັ້ນກໍໄດ້ຮັບເຮົາ ແລະຜູ້ໃດຮັບເຮົາ ຜູ້ນັ້ນກໍຮັບພຣະອົງຜູ້ຊົງໃຊ້ເຮົາມາ ເພາະວ່າໃນພວກທ່ານ
ຜູ້ໃດເປັນຜູ້ນ້ອຍກວ່າໝູ່ ຜູ້ນັ້ນແຫລະ, ເປັນຜູ້ໃຫຍ່."

## ຜູ້ໃດບໍ່ຕໍ່ສູ້ທ່ານກໍເປັນຝ່າຍທ່ານ

*(ມຣກ 9:38-40)*

49ຝ່າຍໂຢຮັນທູນພຣະອົງວ່າ, "ອາຈານເຈົ້າເອີຍ, ພວກຂ້ານ້ອຍໄດ້ເຫັນຄົນຜູ້ໜຶ່ງຂັບໄລ່ຜີ
ອອກໃນນາມຂອງທ່ານ ແລະພວກຂ້ານ້ອຍໄດ້ຫ້າມຄົນນັ້ນເສຍ ເພາະເພິ່ນບໍ່ຮ່ວມຕິດຕາມ
ພຣະອົງກັບພວກຂ້ານ້ອຍ." 50ພຣະເຢຊູຊົງຕອບໂຢຮັນວ່າ, "ຢ່າຫ້າມເຫາະ ເພາະວ່າຜູ້ໃດບໍ່ຕໍ່-
ສູ້ພວກທ່ານກໍເປັນຝ່າຍທ່ານແລ້ວ."

## ຊາວຊາມາເຣຍບ້ານໜຶ່ງບໍ່ຍອມຕ້ອນຮັບພຣະເຢຊູ

51ຄັນຈວນເວລາທີ່ພຣະອົງຈະຊົງຖືກຮັບຂຶ້ນເມື່ອນັ້ນ ພຣະອົງຊົງຕັ້ງພຣະໄທແນ່ວແນ່ຈະໄປ
ສູ່ກຸງເຢຣູຊາເລັມ. 52ແລະພຣະອົງໄດ້ຊົງໃຊ້ຜູ້ຮັບໃຊ້ໄປກ່ອນໜ້າພຣະອົງ ເມື່ອຜູ້ຮັບໃຊ້ນັ້ນໄປ
ແລ້ວ ເຂົາກໍເຂົ້າໄປໃນບ້ານໜຶ່ງຂອງຊາວຊາມາເຣຍ ເພື່ອຈັດແຈງໄວ້ສຳລັບພຣະອົງ. 53ແຕ່
ຊາວບ້ານນັ້ນບໍ່ໄດ້ຕ້ອນຮັບພຣະອົງ ເພາະພຣະອົງຊົງຕັ້ງພຣະພັກຈະໄປສູ່ກຸງເຢຣູຊາເລັມ.
54ເມື່ອສາວົກຂອງພຣະອົງ ຄືຢາໂກໂບແລະໂຢຮັນ ໄດ້ເຫັນດັ່ງນັ້ນ ເຂົາຈຶ່ງທູນວ່າ, "ນາຍ
ເອີຍ, ທ່ານປະສົງຢາກໃຫ້ຂ້ານ້ອຍບອກໃຫ້ໄຟລົງມາຈາກສະຫວັນ ເພື່ອເຜົາຜານເຂົາເສຍ
ຫລື!". 55ແຕ່ພຣະອົງຊົງຫລຽວໄປຫ້າມປາມເຂົາທັງສອງ [ແລະຊົງກ່າວວ່າ, "ທ່ານບໍ່ຮູ້ວ່າທ່ານມີ
ຈິດໃຈແນວໃດ ເພາະວ່າບຸດມະນຸດບໍ່ໄດ້ມາເພື່ອທຳລາຍຊີວິດມະນຸດ ແຕ່ມາເພື່ອໂຜດໃຫ້ເຂົາ
ພົ້ນ."] 56ແລະພຣະອົງໄດ້ສະເດັດພ້ອມກັບພວກສາວົກເຂົ້າໄປສູ່ບ້ານອື່ນ.

## ຜູ້ສະໝັກຈະຕາມພຣະອົງໄປ

*(ມທ 8:19-22)*

57ຂະນະທີ່ພຣະອົງກຳລັງສະເດັດໄປຕາມທາງພ້ອມກັບພວກສາວົກ ມີຄົນໜຶ່ງມາທູນວ່າ,
"ທ່ານຈະໄປທີ່ໃດຂ້ານ້ອຍຈະຕິດຕາມທ່ານໄປທີ່ນັ້ນ." 58ພຣະເຢຊູຊົງຕອບຜູ້ນັ້ນວ່າ, "ໝາຈິກ-
ຈອກກໍມີຮູແລະນົກປ່າກໍຍັງມີຮັງ ແຕ່ບຸດມະນຸດບໍ່ມີບ່ອນຈະວາງຫົວລົງ." 59ພຣະອົງຊົງກ່າວກັບ
ຄົນໜຶ່ງອີກວ່າ, "ຈົ່ງຕາມເຮົາມາ" ຄົນນັ້ນທູນຕອບວ່າ, "[ນາຍເອີຍ,] ຂໍໂຜດອະນຸຍາດໃຫ້ຂ້າ-
ນ້ອຍໄປຝັງສົບພໍ່ຂອງຂ້ານ້ອຍເສຍກ່ອນ." 60ພຣະອົງຊົງຕອບຜູ້ນັ້ນວ່າ, "ຈົ່ງປະໃຫ້ຄົນຕາຍຝັງ
ກັນເອງເທາະແຕ່ສ່ວນທ່ານ, ຈົ່ງໄປປະກາດລາຊະອານາຈັກຂອງພຣະເຈົ້າ." 61ອີກຄົນໜຶ່ງທູນ
ວ່າ, "ນາຍເອີຍ, ຂ້ານ້ອຍຈະຕາມທ່ານໄປ ແຕ່ຂໍອະນຸຍາດໃຫ້ຂ້ານ້ອຍໄປລາໄທເຮືອນຂອງ
ຂ້ານ້ອຍກ່ອນ." 62ພຣະເຢຊູຊົງບອກຜູ້ນັ້ນວ່າ, "ຜູ້ໃດເອົາມືຈັບງ້ອນໄຖແລ້ວຫລຽວຄືນຫລັງ ຜູ້
ນັ້ນບໍ່ສົມຄວນກັບລາຊະອານາຈັກຂອງພຣະເຈົ້າ."

# ບົດທີ 10

## ພວກເຈັດສິບຄົນອອກໄປປະກາດ

1ພາຍຫລັງເຫດການເຫລົ່ານັ້ນ ອົງພຣະຜູ້ເປັນເຈົ້າໄດ້ຊົງແຕ່ງຕັ້ງພວກອື່ນໄວ້ອີກເຈັດສິບ
[ສອງ] ຄົນ ແລະຊົງໃຊ້ເຂົາອອກໄປລ່ວງໜ້າພຣະອົງເປັນໝູ່ລະສອງຄົນ ໃຫ້ເຂົາເຂົ້າໄປໃນທຸກ
ເມືອງທຸກບ້ານບ່ອນພຣະອົງເອງຈວນຈະສະເດັດໄປນັ້ນ. 2ພຣະອົງຊົງກ່າວກັບເຂົາວ່າ, "ເຂົ້າທີ່
ຈະກ່ຽວກໍມີຫລາຍແທ້ ແຕ່ຄົນທຳງານມັນໜ້ອຍຢູ່ ເພາະສັນນັ້ນພວກທ່ານຈົ່ງອ້ອນວອນຕໍ່ຜູ້ເປັນ
ເຈົ້າຂອງນາ ໃຫ້ຈຳຄົນງານມາໃນການເກັບກ່ຽວຂອງຕົນເສຍ. 3ຈົ່ງໄປເທາະ ແລະເບິ່ງແມ!
ເຮົາໄດ້ໃຊ້ພວກທ່ານໄປເໝືອນດັ່ງແກະນ້ອຍຢູ່ຖ້າມກາງຝູງໝາໄນ. 4ຢ່າຖືກະເປົາເງິນ, ຫລືຖື
ຖົງ, ຫລືຖືເກີບໄປ ແລະຢ່າຄຳນັບຜູ້ໃດຕາມທາງ. 5ຖ້າຈະເຂົ້າໄປໃນເຮືອນຫລັງໃດ ຈົ່ງເວົ້າ
ກ່ອນວ່າ 'ຄວາມສະຫງົບສຸກຈົ່ງມີແກ່ເຮືອນນີ້ເທີ້ນ!'. 6ຖ້າມີຄົນຊອບຄວາມສະຫງົບສຸກຢູ່ໃນ
ເຮືອນນັ້ນ ຄວາມສະຫງົບສຸກຂອງທ່ານຈະສະຖິດຢູ່ໃນທີ່ນັ້ນ ຖ້າຫາກບໍ່ມີ, ຄວາມສະຫງົບສຸກ
ຂອງທ່ານຈະກັບຄືນມາຫາທ່ານອີກ. 7ຈົ່ງອາໃສຢູ່ໃນເຮືອນນັ້ນ ກິນແລະດື່ມຕາມທີ່ເຂົາມີຢູ່
ດ້ວຍວ່າຜູ້ທຳງານກໍຄວນຈະໄດ້ຮັບຄ່າຈ້າງຂອງຕົນ ຢ່າອອກໜີຈາກເຮືອນນີ້ເຂົ້າໄປຢູ່ເຮືອນອື່ນ.
8ຖ້າທ່ານຈະເຂົ້າໄປໃນເມືອງໃດໆ ແລະເຂົາຕ້ອນຮັບທ່ານໄວ້ ຈົ່ງກິນຂອງທີ່ເຂົາຕັ້ງໃຫ້. 9ຈົ່ງ
ເຮັດໃຫ້ຄົນເຈັບປ່ວຍຢູ່ໃນເມືອງນັ້ນດີພະຍາດ ແລະແຈ້ງແກ່ເຂົາວ່າ 'ລາຊະອານາຈັກຂອງ
ພຣະເຈົ້າໄດ້ມາໃກ້ທ່ານທັງຫລາຍແລ້ວ'. 10ຖ້າທ່ານຈະເຂົ້າໃນເມືອງໃດໆ ແລະເຂົາບໍ່ຕ້ອນຮັບ
ທ່ານໄວ້ ຈົ່ງອອກໄປກາງຖະໜົນຂອງເມືອງນັ້ນໂດຍກ່າວວ່າ. 11'ເຖິງແມ່ນວ່າຝຸ່ນດິນໃນເມືອງ
ຂອງເຈົ້າທັງຫລາຍທີ່ຕິດຕີນຂອງພວກເຮົາ ເຮົາກໍຈະປັດອອກຕໍ່ສູ້ພວກເຈົ້າ ແຕ່ຈົ່ງເຂົ້າໃຈຂໍ້ນີ້
ວ່າ ລາຊະອານາຈັກຂອງພຣະເຈົ້າໄດ້ມາໃກ້ເຈົ້າທັງຫລາຍແລ້ວ'. 12ເຮົາບອກພວກທ່ານວ່າ
ໂທດຂອງເມືອງໂຊໂດມໃນວັນນັ້ນຈະທົນງ່າຍກວ່າໂທດຂອງເມືອງນີ້."

## ຊົງຕິຕຽນເມືອງຕ່າງ

*(ມທ 11:20-24)*

13"ວິບັດແກ່ເຈົ້າ, ເມືອງໂຂຣາຊິນ, ວິບັດແກ່ເຈົ້າ, ເມືອງເບັດຊາອີດາເຮີຍ ເພາະຖ້າການ
ອິດທິລິດທີ່ໄດ້ກະທຳໃນທ່າມກາງພວກເຈົ້ານັ້ນ ໄດ້ຖືກກະທຳໃນທ່າມກາງເມືອງຕີເຣແລະເມືອງ
ຊີໂດນ ຄົນໃນເມືອງທັງສອງຄົງໄດ້ຖິ້ມໃຈເກົ່າເອົາໃຈໃໝ່, ນຸ່ງຫົ່ມຜ້າຫຍາບ, ນັ່ງເທິງຂີ້ເທົ່າແຕ່
ດົນນານມາແລ້ວ. 14ແຕ່ໃນວັນພິພາກສາໂທດຂອງເມືອງຕີເຣແລະເມືອງຊີໂດນກໍຈະທົນງ່າຍ
ກວ່າໂທດຂອງພວກເຈົ້າ. 15ຝ່າຍເຈົ້າ, ເມືອງກາເປນາອູມເຮີຍ ເຈົ້າຈະຖືກຍົກຂຶ້ນພຽງຟ້າຫລື
ແຕ່ເຈົ້າຈະຕ້ອງລົງໄປເຖິງແດນມໍລະນາ.

16"ຜູ້ທີ່ຟັງທ່ານທັງຫລາຍກໍໄດ້ຟັງເຮົາ ຜູ້ທີ່ບໍ່ຍອມຮັບທ່ານທັງຫລາຍກໍບໍ່ຍອມຮັບເຮົາ ແລະຜູ້
ທີ່ບໍ່ຍອມຮັບເຮົາກໍບໍ່ຍອມຮັບຜູ້ທີ່ຊົງໃຊ້ເຮົາມາ."

## ພວກເຈັດສິບຄົນກັບມາ

17ຝ່າຍພວກເຈັດສິບ [ສອງ] ຄົນນັ້ນໄດ້ກັບຄືນມາທູນວ່າ, "ນາຍເອີຍ, ເຖິງແມ່ນຜີຮ້າຍກໍ
ຍອມຟັງຄວາມຂອງພວກຂ້ານ້ອຍ ເພາະເຫັນແກ່ນາມຊື່ຂອງທ່ານ." 18ພຣະອົງຊົງກ່າວກັບເຂົາ
ວ່າ, "ເຮົາໄດ້ເຫັນຊາຕານຕົກຈາກຟ້າເໝືອນດັ່ງຟ້າແມບ. 19ແລະເບິ່ງແມ! ເຮົາໄດ້ໃຫ້ພວກ
ທ່ານມີອຳນາດຢຽບງູແລະແມງງອດ ແລະໃຫ້ມີອຳນາດເໜືອກຳລັງຂອງສັດຕູ ແລະບໍ່ມີສິ່ງໃດ
ເຮັດອັນຕະລາຍແກ່ພວກທ່ານໄດ້. 20ແຕ່ວ່າທ່ານທັງຫລາຍຢ່າໄດ້ຍິນດີຢູ່ໃນສິ່ງນີ້ ຄືເພາະຜີທັງ-
ຫລາຍຍອມຟັງຄວາມຂອງທ່ານ ແຕ່ຈົ່ງຊົມຊື່ນຍິນດີເພາະຊື່ຂອງພວກທ່ານໄດ້ຈົດໄວ້ໃນສະ-
ຫວັນແລ້ວ."

## ຊົງຊົມຊື່ນຍິນດີ

*(ມທ 11:25-27; 13:16-17)*

21ໃນເວລາໂມງນັ້ນພຣະເຢຊູຊົງມີຄວາມຊົມຊື່ນຍິນດີດ້ວຍພຣະວິນຍານບໍລິສຸດ ຈຶ່ງຊົງກ່າວ
ວ່າ, "ຂ້າແດ່ພຣະບິດາ, ຜູ້ເປັນເຈົ້າສະຫວັນແລະແຜ່ນດິນໂລກ ຂ້າພຣະອົງສັນລະເສີນພຣະອົງ
ເພາະພຣະອົງຊົງໄດ້ປົກບັງສິ່ງເຫລົ່ານີ້ໄວ້ຈາກຜູ້ມີປັນຍາ ແລະຜູ້ສະຫລາດແຕ່ໄດ້ຊົງສະແດງໃຫ້
ພວກເດັກນ້ອຍຮູ້ ຂ້າແດ່ພຣະບິດາ, ພຣະອົງຊົງເຫັນຊອບດັ່ງນັ້ນ." 22"ພຣະບິດາຂອງເຮົາໄດ້
ຊົງມອບສິ່ງສາລະພັດໃຫ້ແກ່ເຮົາ ແລະບໍ່ມີໃຜຮູ້ວ່າພຣະບຸດແມ່ນຜູ້ໃດ ເວັ້ນໄວ້ແຕ່ພຣະບິດາ
ແລະບໍ່ມີໃຜຮູ້ວ່າພຣະບິດາແມ່ນຜູ້ໃດ ເວັ້ນໄວ້ແຕ່ພຣະບຸດ ກັບຜູ້ທີ່ພຣະບຸດປະສົງຈະສະແດງ
ໃຫ້ຮູ້."

23ແລ້ວພຣະອົງຊົງຫລຽວຫລັງໄປຫາພວກສາວົກ ຊົງກ່າວແກ່ເຂົາໂດຍຈຳເພາະວ່າ, "ຕາ
ທັງຫລາຍທີ່ໄດ້ເຫັນການຊຶ່ງພວກທ່ານໄດ້ເຫັນກໍເປັນສຸກ. 24ເພາະເຮົາບອກທ່ານທັງຫລາຍວ່າ
ຜູ້ປະກາດພຣະທຳຫລາຍຄົນ ແລະກະສັດຫລາຍອົງປາດຖະໜາເຫັນຊຶ່ງພວກທ່ານເຫັນຢູ່ນີ້ ແຕ່
ເຂົາບໍ່ໄດ້ເຫັນ ແລະປາດຖະໜາຢາກໄດ້ຍິນຊຶ່ງພວກທ່ານໄດ້ຍິນ ແຕ່ເຂົາບໍ່ໄດ້ຍິນ."

## ໄທຊາມາເຣຍຜູ້ໃຈດີ

25ແລະເບິ່ງແມ! ມີທຳບັນດິດຄົນໜຶ່ງຢືນຂຶ້ນ ທົດລອງພຣະອົງທູນຖາມວ່າ, "ອາຈານເອີຍ,

ຂ້ານ້ອຍຈະຕ້ອງເຮັດ[ກ] ແນວໃດຈຶ່ງຈະໄດ້ຊີວິດອັນຕະຫລອດໄປເປັນນິດ?". 26ພຣະອົງຊົງ
ຕອບວ່າ, "ໃນພຣະບັນຍັດມີຄຳຂຽນໄວ້ວ່າຢ່າງໃດ ທ່ານໄດ້ອ່ານເຂົ້າໃຈຢ່າງໃດ?". 27ເພິ່ນທູນ
ຕອບວ່າ, "ຈົ່ງຮັກອົງພຣະຜູ້ເປັນເຈົ້າ, ຜູ້ເປັນພຣະເຈົ້າຂອງເຈົ້າ ດ້ວຍສຸດໃຈ, ດ້ວຍສຸດຈິດ,
ດ້ວຍສຸດກຳລັງ, ແລະດ້ວຍສຸດຄວາມຄຶດຂອງເຈົ້າ' ແລະ 'ຈົ່ງຮັກເພື່ອນບ້ານເໝືອນຮັກຕົນ
ເອງ'." 28ພຣະອົງຊົງຕອບເພິ່ນວ່າ, "ທ່ານຕອບຖືກແລ້ວ ຕໍ່ໄປຈົ່ງເຮັດຢ່າງນັ້ນແລ້ວທ່ານຈະໄດ້
ຊີວິດ."

29ແຕ່ຜູ້ນັ້ນປາດຖະໜາຈະສະແດງວ່າຕົວເປັນຄົນສິນທຳ ຈຶ່ງທູນພຣະເຢຊູວ່າ, "ແມ່ນໃຜ
ເປັນເພື່ອນບ້ານຂອງຂ້ານ້ອຍ?". 30ພຣະເຢຊູຊົງຕອບວ່າ, "ມີຊາຍຄົນໜຶ່ງລົງຈາກກຸງເຢຣູຊາ-
ເລັມຈະໄປເມືອງເຢຣິໂກ ແລະຕົກໃນມືພວກປຸ້ນ ພວກປຸ້ນນັ້ນໄດ້ແກ້ເອົາເຄື່ອງນຸ່ງຜູ້ນັ້ນໄປ
ທັງທຸບຕີແລ້ວປະຖິ້ມໄວ້ເກືອບຕາຍ. 31ບັງເອີນມີປະໂລຫິດຕົນໜຶ່ງໄດ້ລົງໄປທາງນັ້ນ ເມື່ອເຫັນ
ຄົນນັ້ນກໍເວັ້ນໄປຟາກອື່ນເສຍ. 32ມີຄົນໜຶ່ງໃນພວກເລວີກໍເຮັດເໝືອນກັນ ເມື່ອມາເຖິງບ່ອນນັ້ນ
ແລະເຫັນແລ້ວ ກໍເວັ້ນກາຍໄປຟາກອື່ນເສຍ. 33ແຕ່ໄທຊາມາເຣຍຄົນໜຶ່ງໄດ້ເດີນທາງມາເຖິງ
ຄົນນັ້ນ ຄັນເຫັນແລ້ວກໍມີໃຈເມດຕາ. 34ແລ້ວເຂົ້າໄປເອົາຜ້າພັນບາດໃຫ້ ແລະເອົານ້ຳມັນກັບ
ເຫລົ້າແວງຖອກໃສ່ບາດນັ້ນ ຈຶ່ງໂຈມຂຶ້ນຂີ່ສັດຂອງຕົນພາໄປເຖິງໂຮງແຮມບ່ອນໜຶ່ງ ແລ້ວເອົາ-
ໃຈໃສ່ບົວລະບັດລາວ. 35ເຖິງວັນໜ້າມາທ່ານໄດ້ອອກເງິນສອງເດນາຣິອົນໃຫ້ເຈົ້າຂອງໂຮງ-
ແຮມ ບອກວ່າ, 'ຈົ່ງເອົາໃຈໃສ່ບົວລະບັດຄົນນີ້ເນີ! ຖ້າທ່ານຈ່າຍເກີນນີ້ໄປເທົ່າໃດ ເມື່ອເຮົາກັບ
ມາກໍຈະໃຊ້ໃຫ້'. 36ໃນສາມຄົນນີ້ ທ່ານເຫັນວ່າຄົນໃດເປັນເພື່ອນບ້ານຂອງຄົນທີ່ຕົກໃນມືພວກ
ປຸ້ນນັ້ນ." 37ທຳບັນດິດຜູ້ນັ້ນທູນຕອບວ່າ, "ຄືຄົນທີ່ໄດ້ສະແດງຄວາມເມດຕາຕໍ່ຜູ້ນັ້ນແຫລະ"
ແລ້ວພຣະເຢຊູຊົງຕອບວ່າ, "ທ່ານຈົ່ງໄປເຮັດຢ່າງນັ້ນເໝືອນກັນ."

## ຊົງຢ້ຽມຢາມມາທາກັບມາຣິອາ

38ເມື່ອພຣະອົງກຳລັງສະເດັດໄປພ້ອມກັບພວກສາວົກ ພຣະອົງໄດ້ຊົງເຂົ້າໄປໃນບ້ານໜຶ່ງ ມີ
ຍິງຄົນໜຶ່ງຊື່ມາທາໄດ້ຕ້ອນຮັບພຣະອົງໄວ້ໃນເຮືອນຂອງຕົນ. 39ມາທາມີນ້ອງສາວຊື່ມາຣິອາ
ແລະມາທາກໍມານັ່ງໃກ້ພຣະບາດຂອງພຣະຜູ້ເປັນເຈົ້າ ຟັງຖ້ອຍຄຳຂອງພຣະອົງ. 40ແຕ່ມາທາ
ໄດ້ມົວເມົາຢູ່ໃນການປະຕິບັດຫລາຍຢ່າງຈຶ່ງມາທູນພຣະອົງວ່າ, "ນາຍເອີຍ, ທ່ານບໍ່ສົນໃຈຫລື
ຊຶ່ງນ້ອງສາວຂອງຂ້ານ້ອຍປະໃຫ້ຂ້ານ້ອຍປະຕິບັດແຕ່ຜູ້ດຽວ ຂໍທ່ານບອກນ້ອງໃຫ້ມາຊ່ອຍຂ້າ-
ນ້ອຍແດ່!". 41ຝ່າຍອົງພຣະຜູ້ເປັນເຈົ້າຊົງຕອບວ່າ, "ມາທາ, ມາທາເອີຍ, ນາງຮ້ອນໃຈເປັນ
ຫ່ວງກະວົນກະວາຍໃນຫລາຍສິ່ງແທ້ໜໍ! 42ສິ່ງຊຶ່ງຕ້ອງການນັ້ນມີແຕ່ສິ່ງດຽວ ມາຣິອາໄດ້ເລືອກ
ເອົາສ່ວນດີນັ້ນ ທີ່ຈະບໍ່ຍຶກເອົາໄປຈາກນາງເສຍ."

[ກ]ຄຳວ່າ "ເຮັດ" ມີຄວາມໝາຍວ່າ "ເຮັດເທື່ອດຽວເປັນການສິ້ນສຸດ."

# ບົດທີ 11

## ຊົງສັ່ງສອນເລື່ອງການອ້ອນວອນ

*(ມທ 6:9-15; 7:7-11)*

1ຢູ່ມາ, ເມື່ອພຣະເຢຊູຊົງອ້ອນວອນຢູ່ໃນບ່ອນໜຶ່ງ ພໍສິ້ນສຸດລົງສາວົກຂອງພຣະອົງຄົນໜຶ່ງ
ທູນວ່າ, "ນາຍເອີຍ, ຂໍສອນພວກຂ້ານ້ອຍໃຫ້ອ້ອນວອນເໝືອນໂຢຮັນໄດ້ສອນພວກລູກສິດ
ຂອງຕົນ." 2ພຣະອົງຊົງກ່າວກັບເຂົາວ່າ, "ເມື່ອພວກທ່ານອ້ອນວອນຈົ່ງກ່າວວ່າ,

'ຂ້າແດ່ພຣະບິດາ
ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄລົບບູຊາ
ຂໍໃຫ້ພຣະລາຊະອານາຈັກຂອງພຣະອົງມາຕັ້ງຢູ່.
3 ຂໍຊົງໂຜດປະທານອາຫານປະຈຳວັນ
ໃຫ້ຂ້າພຣະອົງທັງຫລາຍທຸກໆວັນ.
4 ຂໍຊົງໂຜດຍົກຜິດບາບຂອງຂ້າພຣະອົງທັງຫລາຍ
ດ້ວຍວ່າຂ້າພຣະອົງຍົກຄວາມຜິດບາບຂອງທຸກຄົນ
ທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ
ຂໍຢ່າຊົງພາຂ້າພຣະອົງທັງຫລາຍ ເຂົ້າໄປໃນການທົດລອງ'."

5ພຣະອົງຊົງກ່າວກັບເຂົາວ່າ, "ຜູ້ໃດໃນພວກທ່ານມີມິດສະຫາຍຄົນໜຶ່ງ ແລະຈະໄປຫາມິດ
ສະຫາຍນັ້ນໃນເວລາທ່ຽງຄືນເວົ້າວ່າ 'ສະຫາຍເອີຍ, ຂໍໃຫ້ຂ້ອຍຢືມເຂົ້າຈີ່ຈັກສາມກ້ອນແດ່.
6ເພາະເພື່ອນຄົນໜຶ່ງຂອງຂ້ອຍເດີນທາງມາແວ່ຂ້ອຍ ແລະຂ້ອຍບໍ່ມີອັນໃດຈະສູ່ເພິ່ນກິນ'. 7ຝ່າຍ
ມິດສະຫາຍທີ່ຢູ່ຂ້າງໃນຈະຕອບອອກມາວ່າ, 'ຢ່າລົບກວນເຮົາເທາະ ປະຕູກໍອັດແລ້ວ, ພວກລູກ
ຂອງເຮົາກໍນອນຢູ່ກັບເຮົາໝົດແລ້ວ, ເຮົາລຸກຂຶ້ນເອົາໃຫ້ເຈົ້າບໍ່ໄດ້'. 8ເຮົາບອກທ່ານທັງຫລາຍວ່າ
ເຖິງແມ່ນວ່າຜູ້ນັ້ນຈະບໍ່ລຸກຂຶ້ນເອົາໃຫ້ສະຫາຍນັ້ນ ເພາະການເປັນສະຫາຍກໍຕາມ ແຕ່ເພາະ
ເຫັນແກ່ການດື້ຂໍຂອງສະຫາຍນັ້ນ ເພິ່ນກໍຈະລຸກຂຶ້ນເອົາໃຫ້ຕາມຄວາມຕ້ອງການ.

9ຝ່າຍເຮົາ, ເຮົາບອກພວກທ່ານວ່າ ຈົ່ງໝັ່ນຂໍແລ້ວຈະຊົງປະທານໃຫ້ ຈົ່ງໝັ່ນຊອກແລ້ວຈະ
ພົບ ຈົ່ງໝັ່ນເຄາະແລ້ວຈະຊົງໄຂໃຫ້. 10ເພາະວ່າທຸກຄົນທີ່ໝັ່ນຂໍກໍໄດ້ຮັບ ທຸກຄົນທີ່ໝັ່ນຊອກຫາ
ກໍໄດ້ພົບ ແລະທຸກຄົນທີ່ໝັ່ນເຄາະກໍຊົງໄຂໃຫ້. 11ຜູ້ໃດໃນພວກທ່ານທີ່ເປັນພໍ່ ຖ້າລູກຂໍປາຈະບໍ່
ເອົາງູຕາງປາໃຫ້ແກ່ລູກຕີ້. 12ຖ້າຂໍໄຂ່ຈະບໍ່ໄດ້ເອົາແມງງອດໃຫ້ຕີ້. 13ເຫດສັນນັ້ນຖ້າທ່ານທັງ-
ຫລາຍເອງຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ ຫລາຍກວ່ານັ້ນອີກຈັກເທົ່າໃດ
ພຣະບິດາຜູ້ຊົງສະຖິດໃນສະຫວັນຈະຊົງປະທານພຣະວິນຍານບໍລິສຸດແກ່ຜູ້ທີ່ຂໍຈາກພຣະອົງ."

## ພຣະເຢຊູແລະເບເອນເຊບຸບ

*(ມທ 12:22-30; ມຣກ 3:20-27)*

14ພຣະອົງກຳລັງຊົງຂັບໄລ່ຜີໃບ້ໂຕໜຶ່ງອອກເສຍ ແລະຢູ່ມາ, ເມື່ອຜີນັ້ນອອກແລ້ວຄົນໃບ້ກໍ
ໄດ້ປາກ ແລະປະຊາຊົນກໍປະຫລາດໃຈ. 15ແຕ່ບາງຄົນໃນໝູ່ນັ້ນໄດ້ເວົ້າວ່າ, "ຜູ້ນີ້ຂັບໄລ່ຜີອອກ
ໄດ້ໂດຍໃຊ້ອຳນາດຂອງເບເອນເຊບຸບຄືນາຍຜີນັ້ນ." 16ສ່ວນຄົນອື່ນໄດ້ທົດລອງຂໍນຳພຣະອົງ

ໃຫ້ເຫັນໝາຍສຳຄັນຈາກຟ້າສະຫວັນ. [17]ແຕ່ພຣະອົງຊົງຊາບຄວາມຄິດຂອງເຂົາຈຶ່ງຊົງກ່າວວ່າ,
"ອານາຈັກໃດໆ ທີ່ແຕກແຍກກັນແລ້ວກໍຄົງຈິບຫາຍ ແລະເຮືອນທຸກຫລັງກໍລົ້ມທັບກັນລົງ.
[18]ແລະຖ້າຊາຕານແຕກແຍກກັນເອງ ອານາຈັກຂອງມັນຈະຕັ້ງໝັ້ນຢູ່ໄດ້ຢ່າງໃດ ເພາະທ່ານ
ທັງຫລາຍເວົ້າວ່າເຮົາຂັບໄລ່ຜີອອກໂດຍເບເອນເຊບູບ. [19]ຖ້າເຮົາຂັບໄລ່ຜີອອກໂດຍເບເອນເຊ-
ບູບນັ້ນ ພວກລູກຫລານຂອງທ່ານທັງຫລາຍເຄີຍຂັບມັນອອກດ້ວຍອຳນາດຂອງຜູ້ໃດ ດ້ວຍເຫດ
ນີ້ແຫລະ, ເຂົາຈະເປັນຜູ້ຕັດສິນພວກທ່ານ. [20]ແຕ່ຖ້າເຮົາຂັບໄລ່ຜີອອກດ້ວຍນິ້ວພຣະຫັດຂອງ
ພຣະເຈົ້າ ດັ່ງນັ້ນລາຊະອານາຈັກຂອງພຣະເຈົ້າກໍມາເຖິງພວກທ່ານແລ້ວ. [21]ເມື່ອຄົນແຂງແຮງ
ຖືອາວຸດຄົບຖ້ວນເຝົ້າເຮືອນຂອງຕົນຢູ່ສິ່ງຂອງຂອງຕົນກໍຢູ່ໃນຄວາມປອດໄພ. [22]ແຕ່ເມື່ອມີຄົນ
ແຂງແຮງກວ່າມາຕໍ່ສູ້ແລະຊະນະໄປ ຄົນນັ້ນຈະຍາດເອົາເຄື່ອງອາວຸດທີ່ຕົນໄວ້ວາງໃຈນັ້ນໄປ
ເສຍ ແລ້ວແບ່ງປັນສິ່ງຂອງທີ່ຍາດເອົາໄປນັ້ນ. [23]ຜູ້ໃດບໍ່ຢູ່ຝ່າຍເຮົາກໍຕໍ່ສູ້ກັບເຮົາ ແລະຜູ້ໃດບໍ່
ໂຮມເຂົ້າກັບເຮົາກໍເປັນຜູ້ເຮັດໃຫ້ແຕກກະຈາຍໄປ.

## ຜີຮ້າຍກັບເຂົ້າໃໝ່

*(ມທ 12:43-45)*

[24]"ເມື່ອຜີຖ່ອຍຮ້າຍອອກມາຈາກຜູ້ໃດແລ້ວ ມັນກໍທຽວໄປໃນບ່ອນກັນດານເພື່ອສະແຫວງຫາ
ບ່ອນເຊົາເມື່ອຍ ແຕ່ເມື່ອບໍ່ພົບ ມັນຈຶ່ງເວົ້າວ່າ 'ເຮົາຈະກັບຄືນໄປຍັງເຮືອນຂອງເຮົາທີ່ເຮົາໄດ້
ອອກມານັ້ນ. [25]ເມື່ອມັນມາເຖິງກໍເຫັນວ່າເຮືອນນັ້ນກວາດດີແລະຕົກແຕ່ງໄວ້ແລ້ວ. [26]ເມື່ອນັ້ນ
ມັນຈຶ່ງໄປຮັບເອົາຜີອື່ນອີກເຈັດໂຕຮ້າຍກວ່າມັນເອງ ແລ້ວກໍເຂົ້າໄປອາໃສຢູ່ທີ່ນັ້ນ ແລ້ວສະພາບ
ບັ້ນປາຍຂອງຄົນນັ້ນກໍຮ້າຍກວ່າບັ້ນຕົ້ນ."

## ຜູ້ທີ່ເປັນສຸກແທ້

[27]ຢູ່ມາເມື່ອພຣະອົງຊົງກ່າວຄຳເຫລົ່ານັ້ນຢູ່ ມີຍິງຄົນໜຶ່ງໃນໝູ່ປະຊາຊົນຮ້ອງທູນພຣະອົງວ່າ,
"ທ້ອງທີ່ປະຕິສົນທິທ່ານແລະຫົວນົມທີ່ທ່ານດູດນັ້ນກໍເປັນສຸກ." [28]ແຕ່ພຣະອົງຊົງຕອບວ່າ, "ຄົນ
ທັງຫລາຍທີ່ຟັງພຣະທຳຂອງພຣະເຈົ້າ ແລະຖືຮັກສາພຣະທຳນັ້ນກໍເປັນສຸກຫລາຍກວ່ານັ້ນອີກ."

## ຄົນຊາດຊົ່ວຢາກເຫັນໝາຍສຳຄັນ

*(ມທ 12:38-42; ມຣກ 8:12)*

[29]ເມື່ອປະຊາຊົນໂຮມກັນໜາແໜ້ນຂຶ້ນ ພຣະອົງຊົງຕັ້ງຕົ້ນກ່າວວ່າ, "ສະໄໝນີ້ເປັນສະໄໝ
ຄົນຊົ່ວທີ່ສະແຫວງຫາໝາຍສຳຄັນ ແລະຈະບໍ່ຊົງໂຜດໝາຍສຳຄັນໃຫ້ແກ່ເຂົາເວັ້ນໄວ້ແຕ່ໝາຍ
ສຳຄັນເລື່ອງໂຢນາ. [30]ດ້ວຍວ່າໂຢນາໄດ້ເປັນໝາຍສຳຄັນແກ່ຊາວນີເນເວຢ່າງໃດ ບຸດມະນຸດ
ກໍເປັນໝາຍສຳຄັນແກ່ຄົນສະໄໝນີ້ຢ່າງນັ້ນ. [31]ນາງກະສັດຝ່າຍທິດໃຕ້ຈະລຸກຂຶ້ນໃນວັນພິພາກ-
ສາພ້ອມກັບຄົນສະໄໝນີ້ ຊົງກ່າວໂທດໃສ່ເຂົາ ເພາະພະລາຊີນີນັ້ນໄດ້ສະເດັດມາແຕ່ທີ່ສຸດໂລກ
ເພື່ອຈະຊົງຟັງພຣະສະຕິປັນຍາຂອງກະສັດໂຊໂລໂມນ ແລະເບິ່ງແມ! ຊຶ່ງໃຫຍ່ກວ່າກະສັດໂຊ-
ໂລໂມນກໍຢູ່ທີ່ນີ້. [32]ໄທເມືອງນີເນເວຈະຢືນຂຶ້ນໃນວັນພິພາກສາພ້ອມກັບຄົນສະໄໝນີ້ ກ່າວ
ໂທດໃສ່ເຂົາ ດ້ວຍວ່າໄທເມືອງນີເນເວໄດ້ຖິ້ມໃຈເກົ່າເອົາໃຈໃໝ່ເພາະຄຳປະກາດຂອງໂຢນາ
ແລະເບິ່ງແມ, ຊຶ່ງໃຫຍ່ ກວ່າໂຢນາກໍມີຢູ່ທີ່ນີ້.

## ຄວາມສະຫວ່າງຂອງຮ່າງກາຍ

*(ມທ 5:15; 6:22-23)*

33“ບໍ່ທ່ອນມີຜູ້ໃດ ເມື່ອໄຕ້ໂຄມແລ້ວຈະຕັ້ງໄວ້ໃນບ່ອນລັບບັງ ຫລືເອົາບຸງມາກວບໄວ້ ແຕ່
ເຄີຍຕັ້ງໄວ້ເທິງເຄື່ອງຮອງຕີນໂຄມ ເພື່ອຄົນທັງຫລາຍທີ່ເຂົ້າມາຈະເຫັນແສງສະຫວ່າງໄດ້.
34ຕາຂອງທ່ານເປັນດວງສະຫວ່າງຂອງຮ່າງກາຍ ເມື່ອຕາຂອງທ່ານປົກກະຕິ ຮ່າງກາຍທຸກ
ສ່ວນກໍສະຫວ່າງໄປເໝືອນກັນ ແຕ່ເມື່ອຕານັ້ນບໍ່ປົກກະຕິ ຮ່າງກາຍຂອງທ່ານກໍມືດໄປເໝືອນ
ກັນ. 35ເຫດສັນນັ້ນຈົ່ງລະວັງໃຫ້ດີຢ້ານວ່າຄວາມສະຫວ່າງທີ່ມີຢູ່ໃນທ່ານນັ້ນມືດໄປ. 36ເຫດສັນ-
ນັ້ນຖ້າກາຍຂອງທ່ານທຸກສ່ວນເຕັມດ້ວຍຄວາມສະຫວ່າງ ບໍ່ມີມືດຈັກບ່ອນ ກໍຈະສະຫວ່າງທົ່ວ
ໄປເໝືອນດັ່ງເວລາແສງໂຄມສ່ອງມາໃຫ້ທ່ານ.”

## ຊົງປະນາມພວກຟາຣີຊາຍແລະພວກທຳບັນຄິດ

*(ມທ 23:1-36; ມຣກ 12:38-40; ລກ 20:45-47)*

37ເມື່ອພຣະອົງຍັງຊົງກ່າວຢູ່ ມີຟາຣີຊາຍຜູ້ໜຶ່ງໄດ້ທູນເຊີນພຣະອົງໄປສະເຫວີຍອາຫານທີ່
ເຮືອນຂອງຕົນ ພຣະອົງຈຶ່ງສະເດັດເຂົ້າໄປແລະຊົງນັ່ງໂຕະ. 38ຝ່າຍຟາຣີຊາຍຜູ້ນັ້ນເມື່ອເຫັນວ່າ
ພຣະອົງບໍ່ໄດ້ຊົງລ້າງຕາມພິທີກ່ອນສະເຫວີຍກໍປະຫລາດໃຈ. 39ອົງພຣະຜູ້ເປັນເຈົ້າຈຶ່ງຊົງກ່າວ
ກັບທ່ານວ່າ, “ເຈົ້າພວກຟາຣີຊາຍເຮີຍ, ເຈົ້າເຄີຍລ້າງຖ້ວຍຊາມໃຫ້ສະອາດແຕ່ຂ້າງນອກ ແຕ່
ຂ້າງໃນຂອງເຈົ້າເຕັມໄປດ້ວຍການລູ່ຊິງເອົາແລະຄວາມຊົ່ວຮ້າຍ. 40ໂອ ຄົນໂງ່ເອີຍ! ຜູ້ທີ່ໄດ້
ສ້າງຂ້າງນອກກໍໄດ້ສ້າງຂ້າງໃນເໝືອນກັນບໍ່ແມ່ນຫລື? 41ແຕ່ຈົ່ງໃຫ້ເຈົ້າບໍລິຈາກໃຫ້ຕາມທີ່ມີຢູ່
ຂ້າງໃນ ດັ່ງນີ້ສິ່ງສາລະພັດກໍສະອາດແກ່ພວກເຈົ້າ.

42“ແຕ່ວິບັດແກ່ເຈົ້າ, ພວກຟາຣີຊາຍເຮີຍ ເພາະວ່າເຈົ້າແບ່ງຜັກເສີມ, ຜັກແພວ, ແລະຜັກ
ອື່ນທຸກຢ່າງເປັນສິບສ່ວນ ເອົາໜຶ່ງສ່ວນເປັນຂອງຖວາຍ ແຕ່ໄດ້ຫລີກເວັ້ນຄວາມຍຸດຕິທຳແລະ
ຄວາມຮັກພຣະເຈົ້າ ແມ່ນສິ່ງເຫລົ່ານີ້ແຫລະ, ທີ່ພວກເຈົ້າຄວນໄດ້ປະຕິບັດຢູ່ ໂດຍບໍ່ຕ້ອງລະ
ເວັ້ນສິ່ງອື່ນນັ້ນ. 43ວິບັດແກ່ເຈົ້າ, ພວກຟາຣີຊາຍເຮີຍ, ດ້ວຍພວກເຈົ້າຊອບບ່ອນນັ່ງອັນມີກຽດ
ໃນໂຮງທຳມະເທດສະໜາແລະຊອບໃຫ້ຄົນຄຳນັບໃນທີ່ປະຊຸມຊົນ. 44ວິບັດແກ່ພວກເຈົ້າ, ດ້ວຍ
ວ່າພວກເຈົ້າເປັນເໝືອນບ່ອນຝັງສົບທີ່ບໍ່ປະກົດເຫັນ ແລະຄົນທັງຫລາຍກໍຫຼ່ງອຍຽບບ່ອນນັ້ນ
ໂດຍບໍ່ຮູ້ວ່າມີຫຍັງ.”

45ທຳບັນຄິດຄົນໜຶ່ງທູນພຣະອົງວ່າ, “ອາຈານເອີຍ, ທີ່ທ່ານກ່າວຢ່າງນັ້ນທ່ານກໍປະໝາດ
ພວກເຮົາເໝືອນກັນ.” 46ພຣະອົງຊົງຕອບວ່າ, “ວິບັດຈະມີແກ່ເຈົ້າເໝືອນກັນ, ພວກທຳບັນຄິດ
ເຮີຍ ເພາະວ່າພວກເຈົ້າເອົາຂອງໜັກທີ່ແບກຍາກມາວາງໃສ່ບ່າມະນຸດ ສ່ວນພວກເຈົ້າເອງ,
ແມ່ນແຕ່ນິ້ວມືດຽວກໍບໍ່ຈັບ. 47ວິບັດແກ່ພວກເຈົ້າ, ເພາະພວກເຈົ້າໄດ້ສ້າງອຸບໂມງຂອງພວກຜູ້
ປະກາດພຣະທຳ ຄືພວກນັ້ນແຫລະ, ທີ່ພວກບັນພະບຸລຸດຂອງເຈົ້າເອງໄດ້ຂ້າເສຍ. 48ດັ່ງນັ້ນ
ພວກເຈົ້າເປັນພະຍານແລະຍອມເຫັນດີໃນການເຮັດຂອງບັນພະບຸລຸດຂອງພວກເຈົ້າ ດ້ວຍວ່າ
ເຂົາໄດ້ຂ້າພວກຜູ້ປະກາດພຣະທຳ ແລ້ວພວກເຈົ້າໄດ້ສ້າງອຸບໂມງໃຫ້. 49ເຫດສັນນັ້ນພຣະປັນ-
ຍາຂອງພຣະເຈົ້າຈຶ່ງຊົງກ່າວວ່າ, ‘ເຮົາຈະໃຊ້ພວກຜູ້ປະກາດພຣະທຳແລະອັກຄະສາວົກໄປຫາ

ເຂົາ ແລະເຂົາຈະຂ້າລາງຄົນ ແລະກົດຂີ່ຂົ່ມເຫງລາງຄົນເສຍ. [50]ເພື່ອຄົນສະໄໝນີ້ຈະໄດ້ຖືກ
ແກ້ແຄ້ນຍ້ອນເລືອດຂອງບັນດາຜູ້ປະກາດພຣະທຳ ທີ່ໄຫລອອກຕັ້ງແຕ່ແຮກສ້າງໂລກ. [51]ຄືຕັ້ງ-
ແຕ່ເລືອດຂອງ ອາເບັນ ຈົນເຖິງເລືອດຂອງ ຊາຂາຣີຢາ ທີ່ຖືກຂ້າລະຫວ່າງແທ່ນບູຊາກັບພຣະວິ-
ຫານນັ້ນແມ່ນແລ້ວ, ເຮົາບອກເຈົ້າທັງຫລາຍວ່າຄົນສະໄໝນີ້ຈະຕ້ອງຮັບຜິດຊອບໃນເລືອດນັ້ນ.
[52]ວິບັດແກ່ພວກເຈົ້າ, ທຳບັນດິດເອີຍ, ເພາະວ່າພວກເຈົ້າໄດ້ເອົາຂໍກະແຈແຫ່ງຄວາມຮູ້ໄປເສຍ
ພວກເຈົ້າເອງກໍບໍ່ເຂົ້າໄປ ແລະຄົນທີ່ກຳລັງເຂົ້າໄປນັ້ນພວກເຈົ້າກໍໄດ້ຂັດຂວາງໄວ້."

[53]ເມື່ອພຣະອົງສະເດັດອອກຈາກທີ່ນັ້ນແລ້ວ ພວກນັກທຳແລະພວກ ຟາຣີຊາຍ ຕັ້ງຕົ້ນໂຈມຕີ
ແລະຍົວະເຍົ້າພຣະອົງ ໝາຍຈະໃຫ້ອົງກ່າວຫລາຍຢ່າງຕໍ່ໄປ. [54]ໂດຍຫວັງຄອຍຈັບຜິດໃນຄຳ
ໃດຄຳໜຶ່ງທີ່ອອກມາຈາກພຣະໂອດຂອງພຣະອົງ.

# ບົດທີ 12

## ຊົງເຕືອນໃຫ້ລະວັງຄວາມໜ້າຊື່ໃຈຄົດ

[1]ໃນເວລານັ້ນປະຊາຊົນເຕົ້າໂຮມກັນເປັນໝື່ນໆ ຈົນຢຽດຢຽບກັນ ພຣະອົງຊົງຕັ້ງຕົ້ນກ່າວກັບ
ພວກສາວົກກ່ອນວ່າ, "ຈົ່ງລະວັງກ່ຽວກັບເຊື້ອແປ້ງຂອງພວກ ຟາຣີຊາຍ ຄືຄວາມໜ້າຊື່ໃຈຄົດ
ຂອງເຂົາ. [2]ແຕ່ບໍ່ມີສິ່ງໃດປົກບັງໄວ້ທີ່ຈະບໍ່ເປີດເຜີຍ ຫລືສິ່ງລັບທີ່ບໍ່ປະກົດໃຫ້ຮູ້. [3]ເຫດສັນນັ້ນ
ສິ່ງໜຶ່ງສິ່ງໃດທີ່ທ່ານເວົ້າໃນບ່ອນມືດ ກໍໄດ້ຍິນໃນບ່ອນແຈ້ງ ແລະສິ່ງທີ່ພວກທ່ານຊຸບໃສ່ຫູໃນ
ຫ້ອງສ່ວນຕົວ ຈະຕ້ອງປະກາດເທິງຫລັງຄາເຮືອນ.

## ຜູ້ທີ່ເຮົາຄວນຢ້ານ

*(ມທ 10:28-31)*

[4]"ມິດສະຫາຍເອີຍ, ເຮົາບອກທ່ານທັງຫລາຍວ່າ ຢ່າຊູ່ຢ້ານຜູ້ທີ່ຂ້າໄດ້ແຕ່ຮ່າງກາຍ ແລະ
ພາຍຫລັງຈະເຮັດສິ່ງໃດບໍ່ໄດ້ອີກ. [5]ແຕ່ເຮົາຈະເຕືອນໃຫ້ພວກທ່ານຮູ້ວ່າຄວນຢ້ານຜູ້ໃດ ຈົ່ງຢ້ານ
ພຣະອົງຜູ້ຊົງຂ້າ ແລ້ວກໍຊົງຍັງມີອຳນາດທີ່ຈະຖິ້ມລົງໃນນະລົກໄດ້ ແມ່ນແທ້, ເຮົາບອກພວກ
ທ່ານວ່າ ຈົ່ງຢ້ານພຣະອົງນັ້ນແຫລະ. [6]ນົກຈອກຫ້າໂຕເຂົາຂາຍສອງອັດ ບໍ່ແມ່ນຫລື ແລະນົກ
ນັ້ນ, ແມ່ນແຕ່ໂຕດຽວກໍບໍ່ຢູ່ນອກສາຍພຣະເນດຂອງ ພຣະເຈົ້າ. [7]ເຖິງຜົມຂອງທ່ານກໍຊົງນັບໄວ້
ແລ້ວທຸກເສັ້ນ ເຫດສັນນັ້ນຢ່າຊູ່ຢ້ານ ພວກທ່ານກໍປະເສີດກວ່ານົກຈອກຫລາຍໂຕ.

## ການຮັບພຣະຄຣິດຕໍ່ໜ້າມະນຸດ

*(ມທ 10:32-33; 12:32; 10:19-20)*

[8]"ເຮົາບອກທ່ານທັງຫລາຍວ່າ ທຸກຄົນທີ່ຈະຮັບເຮົາຕໍ່ໜ້າມະນຸດ ບຸດມະນຸດກໍຈະຮັບຜູ້ນັ້ນຕໍ່-
ໜ້າພວກເທວະດາຂອງ ພຣະເຈົ້າ ເໝືອນກັນ. [9]ແຕ່ຜູ້ໃດຈະປະຕິເສດເຮົາຕໍ່ໜ້າມະນຸດ ຜູ້ນັ້ນຈະ
ຖືກປະຕິເສດຕໍ່ໜ້າພວກເທວະດາຂອງ ພຣະເຈົ້າ ເໝືອນກັນ. [10]ຜູ້ໃດທີ່ຈະກ່າວຄຳໜຶ່ງຄຳໃດຕໍ່ສູ້
ບຸດມະນຸດຈະຊົງໂຜດອະໄພໃຫ້ແກ່ຜູ້ນັ້ນໄດ້ ແຕ່ຖ້າຜູ້ໃດຈະກ່າວຄຳໝິ່ນປະໝາດຕໍ່ ພຣະວິນ-
ຍານບໍລິສຸດ ຈະຊົງໂຜດອະໄພໃຫ້ແກ່ຜູ້ນັ້ນບໍ່ໄດ້. [11]ເມື່ອເຂົາຈະພາພວກທ່ານໄປຕໍ່ໜ້າທີ່ປະຊຸມ
ໃນໂຮງທຳມະເທດສະໜາ ຫລືຕໍ່ໜ້າຜູ້ປົກຄອງແລະຜູ້ມີອຳນາດ ຢ່າຄິດອຸກໃຈວ່າຈະແກ້ຕົວ-

ຢ່າງໃດ ຫລືຈະເວົ້າຢ່າງໃດ. 12ເພາະໃນໂມງນັ້ນພຣະວິນຍານບໍລິສຸດຈະຊົງໂຜດສອນທ່ານວ່າ
ຄວນຈະເວົ້າອັນໃດ.”

## ຄຳອຸປະມາເລື່ອງເສດຖີໂງ່

13ມີຄົນໜຶ່ງໃນໝູ່ປະຊາຊົນໄດ້ທູນພຣະອົງວ່າ, “ອາຈານເອີຍ, ຂໍທ່ານສັ່ງອ້າຍຂອງຂ້ານ້ອຍ
ແບ່ງມໍລະດົກໃຫ້ຂ້ານ້ອຍແດ່!”. 14ແຕ່ພຣະອົງຊົງຕອບວ່າ, “ຊາຍເອີຍ, ໃຜໄດ້ຕັ້ງເຮົາໃຫ້ເປັນ
ຕຸລາການຫລືເປັນຜູ້ແບ່ງມໍລະດົກໃຫ້ທ່ານ?”. 15ແລ້ວພຣະອົງຊົງບອກເຂົາວ່າ, “ຈົ່ງລະວັງ
ແລະຮັກສາຕົວໄວ້ຈາກການໂລບທຸກຢ່າງເພາະຊີວິດຂອງມະນຸດບໍ່ຂຶ້ນຢູ່ກັບເຂົ້າຂອງອັນບໍລິບູນ
ທີ່ຕົນມີນັ້ນ.” 16ພຣະອົງຈຶ່ງຊົງບອກຄຳອຸປະມາຂໍ້ໜຶ່ງໃຫ້ເຂົາຟັງວ່າ, “ທີ່ດິນຂອງເສດຖີຄົນໜຶ່ງ
ໄດ້ເກີດຜົນບໍລິບູນ. 17ເສດຖີຄົນນັ້ນຈຶ່ງຄຶດໃນໃຈວ່າ ‘ເຮົາຈະເຮັດແນວໃດໜໍ ເພາະບໍ່ມີບ່ອນຈະ
ເກັບຜົນລະປູກຂອງເຮົາໄວ້’. 18ເພິ່ນຈຶ່ງເວົ້າວ່າ ‘ເຮົາຈະເຮັດດັ່ງນີ້ ຄືຈະມ້າງເລົ້າທັງຫລາຍຂອງ
ເຮົາເສຍ ແລະຈະສ້າງຂຶ້ນໃໝ່ໃຫ້ໃຫຍ່ກວ່າເກົ່າ ແລ້ວເຮົາຈະຮວບຮວມເຂົ້າກັບສິ່ງຂອງທັງໝົດ
ຂອງເຮົາໄວ້ທີ່ນັ້ນ. 19ແລ້ວເຮົາຈະເວົ້າແກ່ຈິດໃຈຂອງເຮົາວ່າ, “ຈິດໃຈເອີຍ, ເຈົ້າມີເຂົ້າຂອງເກັບ
ໄວ້ພໍຫລາຍປີ ຈົ່ງຢູ່ສະບາຍ ກິນແລະດື່ມດ້ວຍຄວາມປິຕິຍິນດີເທາະ’.” 20ແຕ່ພຣະເຈົ້າຊົງກ່າວ
ຕໍ່ຜູ້ນັ້ນວ່າ ‘ໂອຄົນໂງ່ເອີຍ, ໃນຄືນວັນນີ້ເຂົາຈະເອີ້ນເອົາຈິດໃຈຂອງເຈົ້າໄປຈາກເຈົ້າ ແລ້ວສິ່ງ
ຂອງທັງຫລາຍທີ່ເຈົ້າຈັດແຈງໄວ້ນັ້ນຈະຕົກເປັນຂອງໃຜ?’. 21ຄົນທີ່ທ້ອນໂຮມຊັບສົມບັດໄວ້ສຳ-
ລັບຕົນແລະບໍ່ຮັ່ງມີຕໍ່ພຣະເຈົ້າ ກໍເປັນຢ່າງນັ້ນແຫລະ.”

## ເລື່ອງຄວາມກະວົນກະວາຍ

*(ມທ 6:25-34)*

22ແລ້ວພຣະອົງຊົງກ່າວກັບພວກສາວົກວ່າ, “ດ້ວຍເຫດນັ້ນເຮົາບອກທ່ານທັງຫລາຍວ່າ ຢ່າ
ກະວົນກະວາຍເຖິງຊີວິດຂອງຕົນວ່າຈະກິນຫຍັງ ແລະເຖິງຮ່າງກາຍຂອງຕົນວ່າຈະນຸ່ງຫົ່ມ
ຫຍັງ? 23ເພາະວ່າຊີວິດກໍສິ່ງກວ່າອາຫານ ແລະຮ່າງກາຍກໍສິ່ງກວ່າເຄື່ອງນຸ່ງຫົ່ມ. 24ຈົ່ງພິຈາ-
ລະນາເບິ່ງຝູງກາ ມັນບໍ່ໄດ້ຫວ່ານ, ບໍ່ໄດ້ກ່ຽວ, ບໍ່ມີເລົ້າ, ແລະບໍ່ມີບ່ອນເກັບຂອງໄວ້ ແຕ່ພຣະ-
ເຈົ້າຍັງຊົງລ້ຽງມັນໄວ້ ທ່ານທັງຫລາຍປະເສີດກວ່ານົກຫລາຍປານໃດ? 25ມີໃຜໃນພວກທ່ານ
ໂດຍຄວາມກະວົນກະວາຍ ອາດຕໍ່ຊີວິດໃຫ້ຍາວອອກໄປຈັກສອກໜຶ່ງໄດ້ຫລື! 26ເຫດສັນນັ້ນຖ້າ
ສິ່ງເລັກນ້ອຍຍັງເຮັດບໍ່ໄດ້ ທ່ານຍັງກະວົນກະວາຍເຖິງສິ່ງອື່ນອີກເຮັດຫຍັງ. 27ຈົ່ງພິຈາລະນາ
ເບິ່ງດອກໄມ້ວ່າມັນປົ່ງຂຶ້ນຢ່າງໃດ ມັນບໍ່ໄດ້ເຮັດການ, ມັນບໍ່ໄດ້ເຂັນຝ້າຍ ແຕ່ເຮົາບອກທ່ານ
ທັງຫລາຍວ່າ ເຖິງແມ່ນກະສັດໂຊໂລໂມນເມື່ອບໍລິບູນດ້ວຍສະຫງ່າລາສີ ກໍບໍ່ໄດ້ຫົ່ງເຄື່ອງງາມທໍ່
ດອກໄມ້ນີ້ດອກໜຶ່ງ. 28ຖ້າພຣະເຈົ້າຊົງຕົກແຕ່ງຫຍ້າທີ່ທົ່ງນາຢ່າງນັ້ນ ຊຶ່ງເປັນຢູ່ວັນນີ້ແລະວັນ
ໜ້າຕ້ອງຖິ້ມໃສ່ເຕົາໄຟເສຍ ໂອ ຄົນທີ່ມີຄວາມເຊື່ອນ້ອຍເອີຍ, ພຣະອົງຈະຊົງຕົກແຕ່ງພວກ
ທ່ານຫລາຍກວ່ານັ້ນເທົ່າໃດ? 29ທ່ານທັງຫລາຍຢ່າຊອກຫາວ່າຈະກິນຫຍັງ, ຫລືຈະດື່ມຫຍັງ,
ແລະຢ່າກະວົນກະວາຍ. 30ເພາະຄົນນອກສາດສະໜາທົ່ວໂລກຊອກຫາສິ່ງຂອງທັງປວງນີ້ ແຕ່
ພຣະບິດາຂອງພວກທ່ານຊົງຊາບແລ້ວວ່າທ່ານຕ້ອງການສິ່ງເຫລົ່ານີ້. 31ແຕ່ຈົ່ງຊອກຫາລາຊະ
ອານາຈັກຂອງພຣະອົງ ແລ້ວສິ່ງເຫລົ່ານີ້ຈະຊົງເພີ່ມເຕີມໃຫ້.

## ເລື່ອງຊັບສົມບັດໄວ້ໃນສະຫວັນ

*(ມທ 6:19-21)*

32"ແກະຝູງນ້ອຍເອີຍ, ຢ່າຊູ່ຢ້ານ ເພາະພຣະບິດາຂອງພວກທ່ານຊົງຊອບພຣະໄທຈະປະ-
ທານລາຊະອານາຈັກໃຫ້ແກ່ພວກທ່ານ. 33ຈົ່ງຂາຍສິ່ງຂອງທີ່ພວກທ່ານມີຢູ່ໃຫ້ເປັນທານ ຈົ່ງ
ເຮັດຖົງເງິນອັນບໍ່ຮູ້ເກົ່າໄວ້ສຳລັບຕົນ ຄືໃຫ້ມີຊັບສົມບັດໄວ້ໃນສະຫວັນຊຶ່ງບໍ່ຮູ້ໝົດ ທີ່ຂະໂມຍ
ເຂົ້າໄປໃກ້ບໍ່ໄດ້ແລະທີ່ມອດທຳລາຍບໍ່ໄດ້. 34ເພາະວ່າຊັບສົມບັດຂອງທ່ານຢູ່ທີ່ໃດ ໃຈຂອງທ່ານ
ກໍຢູ່ທີ່ນັ້ນແຫລະ.

## ຂ້ອຍໃຊ້ທີ່ຕຽມຕົວໄວ້ພ້ອມແລ້ວ

35"ທ່ານທັງຫລາຍຈົ່ງຮັດແອວໄວ້ແລະໄຕ້ໂຄມຂອງທ່ານຢູ່. 36ພວກທ່ານຈົ່ງເປັນເໝືອນຄົນທີ່
ຄອຍຮັບນາຍຂອງຕົນ ເມື່ອນາຍຈະກັບມາຈາກການແຕ່ງງານ ເພື່ອເວລານາຍມາເຄາະປະຕູ
ແລ້ວ ເຂົາຈະໄຂໃຫ້ໂລດ. 37ພວກຂ້ອຍໃຊ້ທີ່ນາຍມາພົບເມື່ອກຳລັງຄອຍຖ້າຢູ່ກໍເປັນສຸກ ເຮົາ
ບອກພວກທ່ານຕາມຄວາມຈິງວ່າ ນາຍນັ້ນຈະຮັດແອວໄວ້ແລະໃຫ້ພວກຂ້ອຍໃຊ້ນັ້ນນັ່ງໂຕະ
ແລ້ວເພິ່ນຈະມາບົວລະບັດເຂົາ. 38ຖ້ານາຍມາຍາມສອງຫລືຍາມສາມໃນເວລາກາງຄືນ ແລະ
ພົບຂ້ອຍໃຊ້ເຝົ້າຢູ່ຢ່າງນັ້ນ ເຂົາກໍເປັນສຸກ. 39ໃຫ້ທ່ານທັງຫລາຍເຂົ້າໃຈຢ່າງນີ້ວ່າ ຖ້າເຈົ້າຂອງ
ເຮືອນໄດ້ຮູ້ກ່ອນວ່າໂຈນຈະມາໃນໂມງໃດ ຕົນຈະບໍ່ປະໃຫ້ໂຈນເຈາະເຂົ້າເຮືອນໄດ້. 40ທ່ານທັງ-
ຫລາຍກໍເໝືອນກັນ ຈົ່ງຕຽມຕົວໄວ້ໃຫ້ພ້ອມ ເພາະໃນໂມງທີ່ພວກທ່ານບໍ່ຄຶດບໍ່ຝັນນັ້ນ ບຸດມະ-
ນຸດຈະສະເດັດມາ."

## ເລື່ອງຂ້າໃຊ້ສັດຊື່ແລະຂ້າໃຊ້ຊົ່ວ

*(ມທ 24:45-51)*

41ຝ່າຍເປໂຕຈຶ່ງທູນພຣະອົງວ່າ, "ນາຍເອີຍ, ທ່ານໄດ້ບອກຄຳອຸປະມານີ້ແກ່ພວກຂ້ານ້ອຍ
ຫລືບອກແກ່ຄົນທັງປວງ." 42ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ, "ໃຜເປັນຜູ້ຈັດການທີ່ສັດຊື່ແລະ
ສະຫລາດ ຊຶ່ງນາຍໄດ້ຕັ້ງໃຫ້ເປັນໃຫຍ່ເໜືອຄົນໃຊ້ທັງຫລາຍຂອງຕົນ ເພື່ອແຈກອາຫານຕາມ
ເວລາ. 43ເມື່ອນາຍມາພົບຂ້າໃຊ້ຜູ້ກຳລັງເຮັດຢ່າງນັ້ນຢູ່ມັນກໍເປັນສຸກ. 44ເຮົາບອກພວກທ່ານ
ຕາມຄວາມຈິງວ່າ ນາຍຈະຕັ້ງຜູ້ນັ້ນໄວ້ເໜືອບັນດາເຂົ້າຂອງຂອງຕົນ. 45ແຕ່ຖ້າຜູ້ນັ້ນຄຶດວ່າ
'ນາຍຂອງເຮົາຈະນານມາດອກ' ແລ້ວກໍຕັ້ງຕົ້ນທຸບຕີພວກຄົນໃຊ້ຊາຍຍິງ ທັງກິນແລະດື່ມຈົນ
ເມົາໄປ. 46ນາຍຂອງຂ້ອຍໃຊ້ນັ້ນຈະມາໃນວັນທີ່ມັນບໍ່ລໍຄອຍ ແລະໃນໂມງທີ່ມັນບໍ່ຮູ້ ນາຍຈະ
ຜ່າມັນໃຫ້ເປັນສອງທ່ອນ ທັງຈະໃຫ້ເຂົ້າສ່ວນກັບຄົນບໍ່ເຊື່ອຟັງ. 47ຂ້ອຍໃຊ້ທີ່ຮູ້ຈັກໃຈນາຍແຕ່ບໍ່
ໄດ້ຈັດຕຽມຕົວໄວ້ແລະບໍ່ໄດ້ເຮັດຕາມໃຈນາຍ ຈະຕ້ອງຖືກຂ້ຽນຫລາຍບາດ. 48ແຕ່ຜູ້ທີ່ບໍ່ຮູ້ຈັກ
ແລ້ວໄດ້ເຮັດສິ່ງທີ່ສົມຄວນຖືກຂ້ຽນ ກໍຈະຖືກຂ້ຽນໜ້ອຍ ຜູ້ໃດໄດ້ຮັບຫລາຍກໍຈະທວງເອົາຈາກຜູ້
ນັ້ນຫລາຍ ແລະຜູ້ທີ່ໄດ້ຮັບຝາກໄວ້ຫລາຍເຂົາຈະທວງເອົາຈາກຜູ້ນັ້ນຫລາຍ.

## ຊົງເປັນເຫດຂອງການແຕກແຍກ

*(ມທ 10:34-36)*

49"ເຮົາໄດ້ເອົາໄຟນີ້ແຫລະ, ມາຄວ່າງໃສ່ແຜ່ນດິນໂລກ ແລະຖ້າໄຟນີ້ລຸກແລ້ວກໍສົມຄວາມ

ປາດຖະໜາ. 50ເຮົາຈະຕ້ອງຮັບບັບຕິສະມາຢ່າງໜຶ່ງ ເຮົາເປັນທຸກຫລາຍເທົ່າໃດໜໍຈົນກວ່າການ
ນັ້ນຈະສຳເລັດ. 51ພວກທ່ານຄຶດວ່າເຮົາມາເພື່ອໃຫ້ເກີດຄວາມສະຫງົບສຸກໃນໂລກຫລື ເຮົາ
ບອກພວກທ່ານວ່າ ບໍ່ແມ່ນດອກ ແຕ່ຈະເຮັດໃຫ້ແຕກແຍກກັນ. 52ດ້ວຍວ່າຕັ້ງແຕ່ນີ້ຕໍ່ໄປ ຫ້າ
ຄົນໃນເຮືອນດຽວຈະແຕກແຍກກັນຄືສາມຕໍ່ສອງແລະສອງຕໍ່ສາມ. 53ເຂົາຈະແຕກແຍກກັນ ຄືພໍ່
ຈາກລູກຊາຍແລະລູກຊາຍຈາກພໍ່ ແມ່ຈາກລູກຍິງແລະລູກຍິງຈາກແມ່ ແມ່ຍ່າຈາກລູກໃພ້ແລະ
ລູກໃພ້ຈາກແມ່ຍ່າ."

## ສັງເກດຄວາມເປັນໄປຂອງສະໄໝ

*(ມທ 16:2-3)*

54ພຣະອົງຊົງກ່າວກັບປະຊາຊົນອີກວ່າ, "ເມື່ອທ່ານທັງຫລາຍເຫັນເມກເກີດຂຶ້ນໃນທິດຕາ-
ເວັນຕົກ ພວກທ່ານກໍເວົ້າທັນທີວ່າຈະມີລົມແລະຝົນຕົກ ແລ້ວກໍເປັນຢ່າງນັ້ນແທ້. 55ເມື່ອພວກ
ທ່ານເຫັນລົມພັດມາແຕ່ທິດໃຕ້ ພວກທ່ານເວົ້າວ່າຈະຮ້ອນເອົ້າ ແລ້ວກໍເປັນຢ່າງນັ້ນແທ້. 56ໂອ
ຄົນໜ້າຊື່ໃຈຄົດເຮີຍ! ເຈົ້າທັງຫລາຍຮູ້ຈັກສັງເກດຄວາມເປັນໄປຂອງແຜ່ນດິນແລະທ້ອງຟ້າ ແຕ່
ເພາະເຫດໃດພວກເຈົ້າຈຶ່ງສັງເກດຄວາມເປັນໄປຂອງສະໄໝນີ້ບໍ່ໄດ້.

## ຄວາມປອງດອງກັນກັບໂຈດຂອງຕົນ

*(ມທ 5:25-26)*

57"ເຫດສັນໃດເຈົ້າທັງຫລາຍບໍ່ຕັດສິນເອົາເອງວ່າ ສິ່ງໃດເປັນສິ່ງຖືກຕ້ອງ. 58ເພາະເມື່ອເຈົ້າ
ກັບໂຈດພາກັນໄປຫາຜູ້ປົກຄອງ ຈົ່ງພະຍາຍາມຫາຊ່ອງທາງປອງດອງກັນເມື່ອຍັງຢູ່ກາງທາງ
ຢ້ານວ່າໂຈດຈະລາກເຈົ້າເຂົ້າໄປຫາຕຸລາການ ແລະຕຸລາການຈະມອບເຈົ້າ ໃຫ້ແກ່ຜູ້ຄຸມ ແລ້ວຜູ້
ຄຸມຈະຂັງເຈົ້າໄວ້ໃນຄຸກ. 59ເຮົາບອກເຈົ້າວ່າ ເຈົ້າຈະອອກຈາກທີ່ນັ້ນບໍ່ໄດ້ກວ່າຈະໄດ້ໃຊ້ໜີ້ໃຫ້
ຈົນຄົບທຸກອັດ.

# ບົດທີ 13

## ຖ້າບໍ່ຖິ້ມໃຈເກົ່າເອົາໃຈໃໝ່ຕ້ອງຈິບຫາຍ

1ໃນຂະນະນັ້ນມີລາງຄົນຢູ່ທີ່ນັ້ນ ໄດ້ເລົ່າເລື່ອງຊາວຄາລີເລທີ່ປີລາດໄດ້ຂ້າ ເອົາເລືອດຂອງ
ເຂົາປົນກັບເຄື່ອງບູຊາທີ່ກຳລັງຖວາຍນັ້ນໃຫ້ພຣະອົງຟັງ. 2ພຣະອົງຊົງຕອບເຂົາວ່າ, "ພວກທ່ານ
ຄຶດວ່າຊາວຄາລີເລໝູ່ນັ້ນເປັນຄົນບາບລື່ນກວ່າຊາວຄາລີເລໝູ່ອື່ນທັງໝົດ ເພາະເຂົາໄດ້ຖືກ
ຄວາມທຸກລຳບາກຢ່າງນັ້ນຫລື. 3ເຮົາບອກທ່ານທັງຫລາຍວ່າ ບໍ່ແມ່ນດອກ ແຕ່ຖ້າພວກທ່ານ
ໝົດທຸກຄົນບໍ່ຖິ້ມໃຈເກົ່າເອົາໃຈໃໝ່ ກໍຈະຈິບຫາຍໄປເໝືອນກັນ. 4ຫລືສິບແປດຄົນນັ້ນຊຶ່ງປ້ອມ
ໃນຊີໂລອາມໄດ້ເຈື່ອນທັບເຂົາຕາຍເສຍນັ້ນ ທ່ານທັງຫລາຍຄຶດວ່າເຂົາເປັນຄົນຜິດລື່ນກວ່າຄົນ
ທັງປວງທີ່ອາໃສຢູ່ໃນກຸງເຢຣູຊາເລັມຫລື. 5ເຮົາບອກທ່ານທັງຫລາຍວ່າ ບໍ່ແມ່ນດອກ ແຕ່ຖ້າ
ພວກທ່ານໝົດທຸກຄົນບໍ່ຖິ້ມໃຈເກົ່າເອົາໃຈໃໝ່ ກໍຈະຈິບຫາຍໄປເໝືອນກັນ."

## ຄຳອຸປະມາເລື່ອງຕົ້ນເດື່ອເທດທີ່ບໍ່ເກີດຜົນ

6ພຣະອົງຊົງກ່າວຄຳອຸປະມາຕໍ່ໄປນີ້ວ່າ, "ຄົນຜູ້ໜຶ່ງມີຕົ້ນເດື່ອເທດຕົ້ນໜຶ່ງໃນສວນອະງຸ່ນຂອງ

ຕົນ ເມື່ອມາຊອກຫາໝາກເດື່ອໃນຕົ້ນນັ້ນກໍບໍ່ພົບ. 7ເພິ່ນຈຶ່ງບອກກັບຄົນງານໃນສວນອະງຸ່ນນັ້ນ
ວ່າ ‘ເບິ່ງແມ! ເຮົາມາຊອກຫາໝາກເດື່ອໃນຕົ້ນນີ້ໄດ້ສາມປີແລ້ວກໍບໍ່ພົບ ຈົ່ງປ້ຳຖິ້ມເສຍ ຈະເອົາ
ໄວ້ຮົກດິນລ້າໆ ເຮັດຫຍັງ?’. 8ແຕ່ຄົນງານຕອບວ່າ ‘ນາຍເອີຍ, ຂໍປະມັນໄວ້ປີນີ້ກ່ອນ ຈົນກວ່າ
ຂ້ານ້ອຍຈະຂຸດດິນອ້ອມເອົາຝຸ່ນໃສ່. 9ຖ້າເມື່ອໜ້າມັນເກີດໝາກກໍດີຢູ່ ຖ້າບໍ່ເກີດໝາກ ພາຍ-
ຫລັງທ່ານຈົ່ງປ້ຳມັນຖິ້ມເສຍ’.”

## ຊົງໂຜດຍິງຫລັງກົ່ງໃນວັນຊະບາໂຕ

10ພຣະອົງຊົງສັ່ງສອນຢູ່ໃນໂຮງທຳມະເທດສະໜາ ບ່ອນໜຶ່ງໃນວັນຊະບາໂຕ. 11ແລະເບິ່ງ
ແມ! ມີຍິງຄົນໜຶ່ງຊຶ່ງຜີເຂົ້າສິງຢູ່ເຮັດໃຫ້ອ່ອນແຮງໄດ້ສິບແປດປີມາແລ້ວ ເປັນຫລັງກົ່ງຍືນຊື່ບໍ່
ໄດ້. 12ເມື່ອພຣະເຢຊູຊົງເຫັນຈຶ່ງເອີ້ນນາງມາ ຊົງບອກວ່າ, “ນາງເອີຍ, ນາງໄດ້ພົ້ນຈາກພະ-
ຍາດແລ້ວ.” 13ເມື່ອພຣະອົງຊົງຢຽດພຣະຫັດວາງໃສ່ຍິງນັ້ນ ໃນທັນໃດນັ້ນຕົວນາງກໍຢຽດຊື່
ແລະນາງກໍສັນລະເສີນພຣະເຈົ້າ. 14ແຕ່ນາຍໂຮງທຳກໍເຄືອງໃຈ ເພາະພຣະເຢຊູໄດ້ຊົງໂຜດໃຫ້
ດີພະຍາດໃນວັນຊະບາໂຕ ຈຶ່ງກ່າວແກ່ປະຊາຊົນວ່າ, “ມີຫົກວັນທີ່ຄວນຈະເຮັດການ ໃນຫົກວັນ
ນີ້ຈົ່ງມາໃຫ້ດີພະຍາດ ແຕ່ວ່າຢ່າໄດ້ມາໃນວັນຊະບາໂຕ.” 15ແລ້ວອົງພຣະຜູ້ເປັນເຈົ້າຊົງຕອບ
ນາຍໂຮງທຳ ໂດຍຊົງກ່າວວ່າ, “ພວກຄົນໜ້າຊື່ໃຈຄົດເຮີຍ! ພວກເຈົ້າບໍ່ໄດ້ແກ້ງົວຫລືລໍຂອງຕົນ
ຈູງອອກຈາກຄອກໄປກິນນ້ຳໃນວັນຊະບາໂຕຫລື! 16ສ່ວນຍິງຄົນນີ້ເປັນລູກຫລານຂອງອັບຣາ-
ຮາມ ຊຶ່ງຊາຕານໄດ້ຜູກມັດໄວ້ໄດ້ສິບແປດປີແລ້ວ ບໍ່ສົມຄວນຫລືທີ່ຈະໃຫ້ນາງພົ້ນຈາກເຄືອງ
ຜູກມັດນີ້ໃນວັນຊະບາໂຕ.” 17ເມື່ອພຣະອົງຊົງກ່າວຄຳເຫລົ່ານີ້ແລ້ວ ບັນດາຄົນທີ່ຕໍ່ສູ້ພຣະອົງກໍມີ
ຄວາມລະອາຍ ແລະປະຊາຊົນກໍຊົມຊື່ນຍິນດີໃນກິດຈະການທັງປວງອັນຮຸ່ງເຮືອງທີ່ກຳລັງເກີດ
ຂຶ້ນດ້ວຍພຣະອົງ.

## ຄຳອຸປະມາເລື່ອງແກ່ນຜັກກາດ

*(ມທ 13:31-32; ມຣກ 4:30-32)*

18ພຣະອົງຊົງກ່າວອີກວ່າ, “ລາຊະອານາຈັກຂອງພຣະເຈົ້າເໝືອນສິ່ງໃດ ແລະເຮົາຈະປຽບ
ລາຊະອານາຈັກນັ້ນກັບສິ່ງໃດ? 19ກໍເໝືອນແກ່ນຜັກກາດເມັດໜຶ່ງ ທີ່ຄົນຜູ້ໜຶ່ງເອົາໄປຫວ່ານໃນ
ສວນຂອງຕົນ ມັນກໍງອກຂຶ້ນເປັນກົກ ແລະນົກປ່າກໍມາເຮັດຄອນອາໃສຢູ່ຕາມກິ່ງກ້ານມັນ.”

## ຄຳອຸປະມາເລື່ອງເຊື້ອແປ້ງ

*(ມທ 13:33)*

20ພຣະອົງຊົງກ່າວຕໍ່ອີກວ່າ, “ເຮົາຈະປຽບລາຊະອານາຈັກຂອງພຣະເຈົ້າກັບສິ່ງໃດ. 21ກໍ
ປຽບເໝືອນເຊື້ອແປ້ງທີ່ຜູ້ຍິງຄົນໜຶ່ງເອົາປົນໃສ່ໃນແປ້ງສາມຜອງ ຈົນແປ້ງນັ້ນຟູຂຶ້ນທັງໝົດ.”

## ເລື່ອງປະຕູຄັບແຄບ

*(ມທ 7:13-14, 21-23)*

22ພຣະອົງໄດ້ສະເດັດໄປຕາມບ້ານຕາມເມືອງຕ່າງໆ ຊົງສັ່ງສອນແລະເດີນທາງຕໍ່ໄປຍັງກຸງ
ເຢຣູຊາເລັມ. 23ມີຄົນຜູ້ໜຶ່ງທູນພຣະອົງວ່າ, “ນາຍເອີຍ, ຜູ້ທີ່ຈະພົ້ນນັ້ນມີແຕ່ໜ້ອຍຄົນຫລື!”.
24ພຣະອົງຊົງຕອບເຂົາວ່າ, “ຈົ່ງເອົາໃຈໃສ່ແຂ່ງກັນເຂົ້າທາງປະຕູຄັບແຄບ ເພາະເຮົາບອກທ່ານ

ທັງຫລາຍວ່າ ຫລາຍຄົນຈະພະຍາຍາມເຂົ້າໄປ ແຕ່ບໍ່ສາມາດເຂົ້າໄດ້. 25ເມື່ອໃດເຈົ້າຂອງເຮືອນ
ລຸກຂຶ້ນອັດປະຕູແລ້ວແລະທ່ານທັງຫລາຍຍືນຢູ່ຂ້າງນອກຕັ້ງຕົ້ນເຄາະປະຕູວ່າ 'ນາຍເອີຍ, ຂໍໄຂ
ໃຫ້ພວກຂ້ານ້ອຍແດ່ທ້ອນ!' ເມື່ອນັ້ນເຈົ້າເຮືອນຈະຕອບພວກທ່ານວ່າ 'ເຮົາບໍ່ຮູ້ຈັກວ່າເຈົ້າມາແຕ່
ໃສ?'. 26ຂະນະນັ້ນພວກທ່ານຈະເວົ້າວ່າ 'ພວກຂ້ານ້ອຍໄດ້ກິນໄດ້ດື່ມກັບທ່ານ ແລະທ່ານໄດ້
ສັ່ງສອນຕາມຖະໜົນຫົນທາງບ້ານເມືອງຂອງພວກຂ້ານ້ອຍ'. 27ຝ່າຍເຈົ້າເຮືອນນັ້ນຈະເວົ້າວ່າ
'ເຮົາບອກເຈົ້າທັງຫລາຍວ່າ ເຮົາບໍ່ຮູ້ຈັກວ່າເຈົ້າມາແຕ່ໃສ ສູເຈົ້າທັງໝົດ, ຜູ້ເຮັດການບໍ່ຊອບທຳ
ເຮີຍ ຈົ່ງຖອຍໄປຈາກເຮົາເສຍ'. 28ເມື່ອທ່ານທັງຫລາຍຈະເຫັນອັບຣາຮາມ, ອີຊາກ, ແລະຢາ-
ໂຄບ ກັບບັນດາຜູ້ປະກາດພຣະທຳຢູ່ໃນລາຊະແຜ່ນດິນຂອງພຣະເຈົ້າ ແຕ່ຝ່າຍພວກເຈົ້າຈະ
ຖືກຊັດຖິ້ມອອກໄປພາຍນອກເສຍ ທີ່ນັ້ນຈະມີການຮ້ອງໄຫ້ແລະຂົບແຂ້ວຢູ່. 29ຈະມີຄົນມາຈາກ
ທິດຕາເວັນອອກ, ທິດຕາເວັນຕົກ, ທິດເໜືອ, ທິດໃຕ້ ມານັ່ງຮ່ວມໂຕະໃນລາຊະແຜ່ນດິນຂອງ
ພຣະເຈົ້າ. 30ແລະເບິ່ງແມ! ຜູ້ທີ່ເປັນປາຍຈະກັບເປັນຕົ້ນ ແລະຜູ້ທີ່ເປັນຕົ້ນຈະກັບເປັນປາຍ."

## ຊົງເສຍພຣະໄທຍ້ອນກຸງເຢຣູຊາເລັມ

*(ມທ 23:37-39)*

31ໃນໂມງນັ້ນມີພວກຟາຣີຊາຍລາງຄົນມາທູນພຣະອົງວ່າ, "ໃຫ້ທ່ານອອກໜີໄປຈາກທີ່ນີ້ເສຍ
ເພາະກະສັດເຮໂຣດຊົງຢາກປະຫານຊີວິດທ່ານເສຍ." 32ພຣະອົງຊົງຕອບເຂົາວ່າ, "ຈົ່ງໄປບອກ
ໝາຈິກຈອກໂຕນັ້ນວ່າ 'ເບິ່ງແມ! ມື້ນີ້ກັບມື້ອື່ນເຮົາກຳລັງຂັບໄລ່ຜີອອກແລະເຮັດໃຫ້ດີພະຍາດ
ແລ້ວວັນທີສາມເຮົາຈະເຖິງທີ່ສຳເລັດ. 33ແຕ່ຢ່າງໃດກໍດີ, ເຮົາຈະຕ້ອງເດີນທາງໄປມື້ນີ້, ມື້ອື່ນ,
ແລະມື້ຮື ເພາະວ່າຜູ້ປະກາດພຣະທຳບໍ່ທ່ອນຖືກຂ້າຢູ່ນອກກຸງເຢຣູຊາເລັມ. 34ໂອ ເຢຣູຊາເລັມ,
ເຢຣູຊາເລັມເອີຍ, ເຈົ້າທີ່ໄດ້ຂ້າບັນດາຜູ້ປະກາດພຣະທຳ ແລະເອົາຫີນຄວ່າງໃສ່ພວກທີ່ຮັບໃຊ້
ມາຫາເຈົ້າ ເຮົາປາດຖະໜາຈັກເທື່ອແລ້ວໜໍ ວ່າຈະຮວບຮວມລູກຂອງເຈົ້າໄວ້ ເໝືອນດັ່ງແມ່ໄກ່
ຮວບຮວມລູກໄວ້ໃຕ້ປີກຂອງມັນ ແຕ່ພວກເຈົ້າບໍ່ຍິນຍອມ. 35ເບິ່ງແມ! ເຮືອນ[ກ] ຂອງເຈົ້າຈະ
ຖືກປະຖິ້ມແລະຮ້າງເປົ່າ ເຮົາບອກພວກເຈົ້າວ່າ ເຈົ້າຈະບໍ່ເຫັນເຮົາອີກຈົນກວ່າເຈົ້າຈະອອກປາກ
ກ່າວວ່າ, 'ຂໍໃຫ້ທ່ານຜູ້ສະເດັດມາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ ຈົ່ງຊົງພຣະຈະເລີນ'."

# ບົດທີ 14

## ຊົງໂຜດຄົນເປັນພະຍາດທ້ອງມານໃຫ້ດີ

1ເມື່ອພຣະອົງສະເດັດເຂົ້າໄປໃນເຮືອນຜູ້ໃຫຍ່ຜູ້ໜຶ່ງຝ່າຍພວກຟາຣີຊາຍ ເພື່ອຮັບປະທານ
ອາຫານໃນວັນຊະບາໂຕ ເຂົາກໍເຝົ້າເບິ່ງພຣະອົງຢູ່. 2ແລະເບິ່ງແມ! ມີຊາຍຄົນໜຶ່ງເປັນພະຍາດ
ທ້ອງມານຢູ່ຕໍ່ພຣະພັກພຣະອົງ. 3ພຣະເຢຊູຊົງຖາມພວກທຳບັນດິດແລະພວກຟາຣີຊາຍວ່າ,
"ຖ້າເຮັດໃຫ້ດີພະຍາດໃນວັນຊະບາໂຕ ຈະຜິດພຣະບັນຍັດຫລືບໍ່?". 4ເຂົາກໍມິດຢູ່ ພຣະອົງຈຶ່ງ
ຊົງຮັບເອົາຄົນນັ້ນແລະເຮັດໃຫ້ດີພະຍາດແລ້ວກໍປ່ອຍໄປ. 5ພຣະອົງຊົງກ່າວກັບເຂົາວ່າ, "ຖ້າ
ຄົນໃດໃນພວກທ່ານມີລູກຫລືງົວຕົກນ້ຳສ້າງ ຈະບໍ່ຮີບດຶງອອກໃນວັນຊະບາໂຕຫລື?". 6ແລະ

[ກ]ຄຳວ່າ "ເຮືອນ" ໝາຍເຖິງກຸງເຢຣູຊາເລັມ ຫລືວ່າ ອາດໝາຍເຖິງພຣະວິຫານ."

ເຂົາບໍ່ສາມາດຈະຕອບພຣະອົງໃນເລື່ອງນີ້ໄດ້.

## ຊົງສອນເລື່ອງແຂກແລະເຈົ້າພາບ

7ຝ່າຍພຣະອົງ, ເມື່ອຊົງເຫັນພວກທີ່ຮັບເຊີນມານັ້ນກຳລັງເລືອກເອົາບ່ອນນັ່ງອັນມີກຽດ
ພຣະອົງຈຶ່ງຊົງກ່າວຄຳອຸປະມາແກ່ເຂົາວ່າ. 8“ເມື່ອຜູ້ໃດເຊີນທ່ານໄປໃນການກິນລ້ຽງສົມລົດ ຢ່າ
ຊູ່ນັ່ງບ່ອນມີກຽດ ຢ້ານວ່າເພິ່ນໄດ້ເຊີນຜູ້ມີກຽດຫລາຍກວ່າທ່ານອີກ. 9ແລະເຈົ້າພາບທີ່ໄດ້ເຊີນ
ທ່ານທັງສອງນັ້ນ ຈະມາເວົ້າກັບທ່ານວ່າ, ‘ບ່ອນນັ່ງຂອງທ່ານຈົ່ງໃຫ້ແກ່ຜູ້ນີ້’ ແລ້ວທ່ານກໍຈະ
ຍ້າຍໄປນັ່ງບ່ອນຕ່ຳທີ່ສຸດດ້ວຍຄວາມລະອາຍ. 10ແຕ່ເມື່ອທ່ານໄດ້ຮັບເຊີນແລ້ວຈົ່ງໄປນັ່ງບ່ອນ
ຕ່ຳທີ່ສຸດ ເພື່ອວ່າເມື່ອທ່ານເຈົ້າພາບມາເວົ້າກັບທ່ານວ່າ ‘ສະຫາຍເອີຍ, ເຊີນຂຶ້ນໄປນັ່ງບ່ອນສູງ
ກວ່າ’ ແລ້ວທ່ານຈະໄດ້ກຽດຕໍ່ໜ້າຄົນທັງຫລາຍທີ່ນັ່ງຮ່ວມໂຕະນຳກັນນັ້ນ. 11ເພາະວ່າທຸກຄົນທີ່
ຍົກຕົວຂຶ້ນຈະຕ້ອງຖືກຖອຍລົງ ແລະຜູ້ທີ່ຖ່ອມຕົວລົງຈະໄດ້ຮັບການຍົກຂຶ້ນ.”
12ແລ້ວພຣະອົງຊົງກ່າວກັບຜູ້ທີ່ເຊີນພຣະອົງວ່າ, “ເມື່ອທ່ານຈັດການກິນລ້ຽງຂຶ້ນນ້ອຍຫລືໃຫຍ່
ກໍຕາມ ຢ່າເຊີນຈຳເພາະບັນດາມິດສະຫາຍ, ຫລືອ້າຍນ້ອງຍາດພີ່ນ້ອງ, ເພື່ອນບ້ານຜູ້ຮັ່ງມີ
ຢ້ານວ່າເຂົາຈະເຊີນທ່ານອີກເປັນການຕອບແທນ. 13ແຕ່ເມື່ອທ່ານຈັດການກິນລ້ຽງຂຶ້ນ ຈົ່ງເຊີນ
ຄົນຍາກຈົນ, ຄົນພິການ, ຄົນຂາເສັ້ງ, ຄົນຕາບອດ. 14ແລ້ວທ່ານຈະເປັນສຸກ ເພາະວ່າເຂົາບໍ່ມີ
ອັນໃດຈະຕອບແທນທ່ານ ດ້ວຍວ່າພຣະເຈົ້າຈະຊົງຕອບແທນທ່ານ ເມື່ອຄົນຊອບທຳເປັນຄືນ
ມາຈາກຄວາມຕາຍແລ້ວ.”

## ຄຳອຸປະມາເລື່ອງການກິນລ້ຽງໃຫຍ່

*(ມທ 22:1-10)*

15ສ່ວນຄົນໜຶ່ງທີ່ນັ່ງຮ່ວມໂຕະ, ເມື່ອໄດ້ຍິນດັ່ງນັ້ນຈຶ່ງທູນພຣະອົງວ່າ, “ຜູ້ທີ່ຈະຮັບປະທານ
ອາຫານໃນແຜ່ນດິນຂອງພຣະເຈົ້າກໍເປັນສຸກ.” 16ພຣະອົງຊົງຕອບຜູ້ນັ້ນວ່າ, “ຍັງມີຄົນໜຶ່ງຈັດ
ງານກິນລ້ຽງໃຫຍ່ແລະໄດ້ເຊີນຫລາຍຄົນມາ. 17ເມື່ອໂມງກິນລ້ຽງເຖິງແລ້ວ, ເພິ່ນໄດ້ໃຊ້ຂ້ອຍ
ຂອງຕົນໄປບອກຜູ້ທີ່ຮັບເຊີນນັ້ນວ່າ ‘ເຊີນມາ, ຂ້ານ້ອຍເທີນ, ເພາະສິ່ງສະລະພັດຕຽມພ້ອມ
ຮຽບຮ້ອຍແລ້ວ’. 18ບັນດາຄົນເຫລົ່ານັ້ນກໍຕັ້ງຕົ້ນແກ້ຕົວ ຜູ້ທຳອິດເວົ້າວ່າ ‘ເຮົາໄດ້ຊື້ນາໄວ້ ເຮົາ
ຈຳເປັນຕ້ອງໄປເບິ່ງນານັ້ນ ເຮົາຂໍນຳກ່ອນ’. 19ອີກຄົນໜຶ່ງເວົ້າວ່າ, ‘ເຮົາໄດ້ຊື້ງົວໄວ້ຫ້າຄູ່ແລະ
ກຳລັງຈະໄປລອງໄປເບິ່ງງົວນັ້ນ ເຮົາຂໍນຳກ່ອນ’. 20ຄົນໜຶ່ງອີກເວົ້າວ່າ ‘ເຮົາໄດ້ແຕ່ງງານ
ເພາະສັນນັ້ນເຮົາໄປບໍ່ໄດ້’. 21ຂ້ອຍໃຊ້ນັ້ນໄດ້ກັບມາເລົ່າເລື່ອງນີ້ໃຫ້ນາຍຟັງ ເຈົ້າເຮືອນກໍຮ້າຍ
ຫລາຍ ຈຶ່ງສັ່ງຂ້ອຍໃຊ້ນັ້ນວ່າ ‘ຈົ່ງຮີບອອກໄປຕາມຖະໜົນໃຫຍ່ຮ່ອມນ້ອຍໃນເມືອງ ແລະພາ
ຄົນຍາກຈົນ, ຄົນພິການ, ຄົນຕາບອດ, ແລະຄົນຂາເສັ້ງເຂົ້າມາທີ່ນີ້’. 22ແລ້ວຂ້ອຍໃຊ້ຈຶ່ງມາ
ບອກວ່າ ‘ນາຍເອີຍ, ອັນທີ່ທ່ານສັ່ງຂ້ານ້ອຍກໍເຮັດແລ້ວ ແຕ່ຍັງມີບ່ອນຫວ້າງເປົ່າຢູ່’. 23ແລະ
ນາຍໄດ້ບອກຂ້ອຍໃຊ້ນັ້ນວ່າ ‘ຈົ່ງອອກໄປຕາມທາງຫລວງແລະຕາມທາງນ້ອຍນອກເມືອງ ນຳ
ຕົວເຂົາໃຫ້ເຂົ້າມາເພື່ອເຮືອນຂອງເຮົາຈະເຕັມ’. 24ເພາະເຮົາບອກເຈົ້າທັງຫລາຍວ່າ ໃນພວກຄົນ
ທີ່ໄດ້ຮັບເຊີນໄວ້ນັ້ນ ບໍ່ມີຜູ້ໃດຈະໄດ້ຊີມເຄື່ອງກິນລ້ຽງຂອງເຮົາຈັກຄົນ.”

## ຄວາມເສຍສະຫລະໃນການເປັນສິດ

25ມີປະຊາຊົນຈຳນວນຫລວງຫລາຍໄດ້ໄປກັບພຣະອົງ ພຣະອົງຊົງຫລຽວຫລັງຊົງກ່າວກັບ
ເຂົາວ່າ. 26"ຖ້າຜູ້ໃດມາຫາເຮົາແລະບໍ່ຊັງພໍ່ແມ່, ລູກເມຍ, ອ້າຍນ້ອງຊາຍຍິງ ກັບທັງຊີວິດຂອງ
ຕົນເອງ ຜູ້ນັ້ນຈະເປັນສິດຂອງເຮົາບໍ່ໄດ້. 27ຜູ້ໃດບໍ່ໄດ້ແບກໄມ້ກາງແຂນຂອງຕົນຕາມເຮົາມາ ຜູ້
ນັ້ນຈະເປັນສິດຂອງເຮົາບໍ່ໄດ້. 28ດ້ວຍວ່າໃນພວກທ່ານມີຜູ້ໃດ, ເມື່ອຈະສ້າງປ້ອມຈະບໍ່ນັ່ງລົງ
ຄິດລາຄາເສຍກ່ອນ ວ່າຈະມີພໍສ້າງໃຫ້ແລ້ວໄດ້ຫລືບໍ່? 29ຢ້ານວ່າເມື່ອໄດ້ວາງຮາກລົງແລ້ວແລະ
ເຮັດໃຫ້ສຳເລັດບໍ່ໄດ້ ຄົນທັງປວງທີ່ເຫັນກໍຈະກ່າວເຍາະເຍີ້ຍວ່າ, 30'ຄົນນີ້ຕັ້ງຕົ້ນກໍ່ແຕ່ເຮັດໃຫ້
ສຳເລັດບໍ່ໄດ້'. 31ຫລືມີກະສັດອົງໃດ ເມື່ອຈະຍົກກອງທັບໄປຕໍ່ສູ້ກັບກະສັດອົງອື່ນ ຈະບໍ່ໄດ້ນັ່ງ
ຄຶດເບິ່ງກ່ອນວ່າ ທີ່ຕົນມີພົນທະຫານໝື່ນໜຶ່ງຈະສູ້ກັບຜູ້ທີ່ຍົກກອງທັງສອງໝື່ນມາຮົບໄດ້ຫລືບໍ່?
32ຖ້າສູ້ບໍ່ໄດ້, ເມື່ອຍັງຢູ່ຫ່າງກັນ ເພິ່ນຈະໃຊ້ທູດໄປຖາມເງື່ອນໄຂຂອງຄວາມສະຫງົບ. 33ຢ່າງ
ນັ້ນແຫລະ, ທຸກຄົນໃນພວກທ່ານທີ່ບໍ່ໄດ້ສະຫລະສິ່ງສະລະພັດທີ່ຕົນມີຢູ່ ຈະເປັນສິດຂອງເຮົາບໍ່
ໄດ້.

## ເລື່ອງເກືອທີ່ໝົດລົດເຄັມ

*(ມທ 5:13; ມຣກ 9:40)*

34"ເກືອເປັນຂອງດີ ແຕ່ຖ້າເກືອນັ້ນໝົດລົດເຄັມໄປແລ້ວ ຈະເຮັດໃຫ້ກັບເຄັມອີກໄດ້ຢ່າງໃດ?
35ຈະໃຊ້ເປັນຝຸ່ນໃສ່ດິນກໍບໍ່ໄດ້ ຈະປະສົມກັບກອງຝຸ່ນສັດເພື່ອເຮັດຝຸ່ນກໍບໍ່ໄດ້ ເຂົາກໍເອົາໄປຖິ້ມ
ເສຍ ຜູ້ໃດມີຫູ, ຈົ່ງຟັງເອົາເທີນ!".

# ບົດທີ 15

## ຄຳອຸປະມາເລື່ອງແກະທີ່ເສຍ

*(ມທ 18:12-14)*

1ຕໍ່ມາບັນດາຄົນເກັບພາສີແລະພວກນອກສິນທຳເຂົ້າມາໃກ້ເພື່ອຈະຟັງພຣະອົງ. 2ຝ່າຍພວກ
ຟາຣີຊາຍ ແລະພວກນັກທຳກໍຈົ່ມວ່າ, "ຜູ້ນີ້ຕ້ອນຮັບຄົນນອກສິນທຳແລະຢູ່ກິນຮ່ວມກັນກັບເຂົາ."
3ພຣະອົງຈຶ່ງຊົງກ່າວຄຳອຸປະມາຂໍ້ນີ້ໃຫ້ເຂົາຟັງວ່າ. 4'ໃນພວກທ່ານມີຄົນໃດທີ່ມີແກະຮ້ອຍໂຕ
ເມື່ອໂຕໜຶ່ງເສຍໄປ ເພິ່ນຈະບໍ່ປະເກົ້າສິບເກົ້າໂຕນັ້ນໄວ້ໃນກາງປ່າ ແລະໄປຊອກຫາໂຕທີ່ເສຍ
ໄປນັ້ນຈົນກວ່າຈະໄດ້ພົບຫລື? 5ເມື່ອພົບແລ້ວເພິ່ນກໍຍົກຂຶ້ນໃສ່ບ່າແບກມາດ້ວຍຄວາມຊົມຊື່ນ
ຍິນດີ. 6ເມື່ອມາເຖິງບ້ານແລ້ວ ເພິ່ນຈຶ່ງເຊີນບັນດາມິດສະຫາຍແລະເພື່ອນບ້ານຂອງຕົນ ໃຫ້ມາ
ພ້ອມພຽງກັນ ແລ້ວຈຶ່ງກ່າວກັບເຂົາວ່າ 'ຈົ່ງຊົມຊື່ນຍິນດີກັບເຮົາເທີນ ເພາະວ່າເຮົາໄດ້ພົບແກະ
ຂອງເຮົາໂຕທີ່ເສຍໄປແລ້ວນັ້ນ'. 7ດັ່ງນັ້ນແຫລະ, ເຮົາບອກທ່ານທັງຫລາຍວ່າ ຈະມີຄວາມປິຕິ-
ຍິນດີໃນສະຫວັນ ເພາະເຫັນແກ່ຄົນນອກສິນທຳຄົນດຽວທີ່ຖິ້ມໃຈເອົາໃຈໃໝ່ ຫລາຍກວ່າຈະ
ຍິນດີກັບຄົນສິນທຳເກົ້າສິບເກົ້າຄົນທີ່ບໍ່ຕ້ອງການຖິ້ມໃຈເກົ່າເອົາໃຈໃໝ່.

## ຄຳອຸປະມາເລື່ອງເງິນທີ່ເສຍ

8"ຍິງຄົນໃດທີ່ມີເງິນຢູ່ສິບຫລຽນ ເມື່ອເສຍຫລຽນໜຶ່ງຈະບໍ່ໄຕ້ໂຄມກວາດເຮືອນຄົ້ນຫາຖ້ວນຖີ່

ຈົນກວ່າຈະພົບຫລື. [9]ເມື່ອພົບແລ້ວຈຶ່ງເອີ້ນພວກສະຫາຍ ແລະບັນດາເພື່ອນບ້ານຂອງຕົນມາ
ພ້ອມພຽງກັນ ແລ້ວຈຶ່ງກ່າວແກ່ເຂົາວ່າ, 'ຈົ່ງມາຊົມຊື່ນຍິນດີກັບເຮົາເທີ້ນ ເພາະເຮົາໄດ້ພົບເງິນ
ຫລຽນໜຶ່ງຂອງເຮົາທີ່ເສຍໄປແລ້ວນັ້ນ'. [10]ດັ່ງນັ້ນແຫລະ, ເຮົາບອກທ່ານທັງຫລາຍວ່າ ຈະມີ
ຄວາມປິຕິຍິນດີໃນຖ້າມກາງພວກເທວະດາຂອງພຣະເຈົ້າ ເພາະເຫັນແກ່ຄົນນອກສິນທຳຄົນ
ດຽວ ທີ່ຖິ້ມໃຈເກົ່າເອົາໃຈໃໝ່."

## ຄຳອຸປະມາເລື່ອງລູກທີ່ເສຍ

[11]ພຣະອົງຊົງກ່າວວ່າ, "ຜູ້ໜຶ່ງມີລູກຊາຍສອງຄົນ. [12]ຜູ້ນ້ອງເວົ້າກັບພໍ່ວ່າ 'ພໍ່ເອີຍ, ສ່ວນຊັບ
ທີ່ຕົກເປັນຂອງຂ້ອຍນັ້ນ ຂໍພໍ່ແບ່ງໃຫ້ຂ້ານ້ອຍເສຍເທາະ' ແລ້ວພໍ່ຈຶ່ງໄດ້ແບ່ງຊັບໃຫ້ລູກທັງສອງ
ຄົນ. [13]ຕໍ່ມາບໍ່ຫລາຍວັນຜູ້ນ້ອງກໍໄດ້ຮວບຮວມເອົາຊັບທັງໝົດ ແລ້ວອອກໜີໄປທ່ຽວເມືອງໄກ
ແລະໄດ້ຜານຊັບຂອງຕົນໃນທີ່ນັ້ນດ້ວຍການໂອ້ໂຖງ. [14]ເມື່ອໄດ້ໃຊ້ຈ່າຍຊັບເຫລົ່ານັ້ນໝົດແລ້ວ
ກໍເລີຍເກີດການອຶດຢາກອັນໃຫຍ່ໃນເມືອງນັ້ນ ແລ້ວລາວກໍຕົກຢູ່ໃນຄວາມຂັດສົນ. [15]ລາວຈຶ່ງ
ໄປຂໍອາໃສຢູ່ກັບຄົນຜູ້ໜຶ່ງໃນເມືອງນັ້ນ ແລ້ວຜູ້ນັ້ນໄດ້ໃຊ້ລາວໄປລ້ຽງໝູທີ່ທົ່ງນາ. [16]ລາວຄຶດ
ຢາກກິນໃຫ້ອີ່ມທ້ອງດ້ວຍຝັກຖົ່ວທີ່ໝູກິນ ແຕ່ບໍ່ມີໃຜເອົາໃຫ້ລາວກິນ. [17]ເມື່ອລາວຮູ້ເມື່ອຄຶງແລ້ວ
ຈຶ່ງເວົ້າວ່າ 'ລູກຈ້າງຂອງພໍ່ເຮົາມີຫລາຍຄົນ ເຂົາຍັງມີອາຫານກິນອີ່ມຈົນເຫລືອ ສ່ວນເຮົາຈະມາ
ຕາຍອຶດຢາກຢູ່ທີ່ນີ້. [18]ຈຳເປັນເຮົາຈະຕ້ອງລຸກກັບຄືນໄປຫາພໍ່ຂອງເຮົາ ແລ້ວຈະເວົ້ານຳເພິ່ນ
ວ່າ, "ພໍ່ເອີຍ, ລູກໄດ້ເຮັດຜິດຕໍ່ສະຫວັນແລະຕໍ່ພໍ່ແລ້ວ. [19]ແລະບໍ່ສົມຄວນຈະໄດ້ເອີ້ນຊື່ວ່າເປັນ
ລູກຂອງພໍ່ອີກຕໍ່ໄປ ແຕ່ຂໍໃຫ້ລູກເປັນເໝືອນລູກຈ້າງຂອງພໍ່ຄົນໜຶ່ງທ້ອນ!".' [20]ແລ້ວລາວກໍລຸກ-
ຂຶ້ນຄືນເມືອຫາພໍ່ຂອງຕົນ ແຕ່ເມື່ອລາວຍັງຢູ່ໄກ ພໍ່ໄດ້ແລເຫັນລາວກໍມີຄວາມເມດຕາ ຈຶ່ງແລ່ນ
ອອກໄປກອດຄໍຈູບລາວດ້ວຍຄວາມຮັກແພງ. [21]ຝ່າຍລູກນັ້ນໄດ້ເອີ່ຍຂຶ້ນຕໍ່ພໍ່ວ່າ 'ພໍ່ເອີຍ, ລູກໄດ້
ເຮັດຜິດຕໍ່ສະຫວັນແລະຕໍ່ພໍ່ແລ້ວ ບໍ່ສົມຄວນຈະໄດ້ເອີ້ນຊື່ວ່າເປັນລູກຂອງພໍ່ຕໍ່ໄປ'. [22]ແຕ່ພໍ່ໄດ້
ເອີ້ນບອກພວກຂ້ອຍໃຊ້ຂອງຕົນວ່າ 'ຈົ່ງຮີບເອົາເຄື່ອງນຸ່ງຢ່າງດີທີ່ສຸດມານຸ່ງໃຫ້ລູກຂອງເຮົາ
ແລະເອົາແຫວນມາສວມໃສ່ມືກັບເອົາເກີບມາສຸບໃສ່ຕີນ. [23]ແລ້ວຈົ່ງເອົາງົວໜຸ່ມໂຕອ້ວນພີມາຂ້າ
ລ້ຽງກັນເພື່ອຊົມຊື່ນຍິນດີ. [24]ເພາະລູກຂອງເຮົາຄົນນີ້ຕາຍແລ້ວກໍໄດ້ຄືນມາ ເສຍໄປແລ້ວກໍໄດ້
ພົບກັນອີກ', ແລະເຂົາທັງຫລາຍກໍຕັ້ງຕົ້ນມີຄວາມຊົມຊື່ນຍິນດີ.

[25]"ຝ່າຍລູກຜູ້ກົກຍັງຢູ່ທີ່ທົ່ງນາ ເມື່ອກຳລັງກັບມາໃກ້ຈະເຖິງເຮືອນແລ້ວ ລາວກໍໄດ້ຍິນສຽງ
ເສບແລະການເຕັ້ນລຳ. [26]ລາວຈຶ່ງເອີ້ນເອົາຄົນໃຊ້ຜູ້ໜຶ່ງອອກມາຖາມວ່າ, 'ນັ້ນແມ່ນການ
ຫຍັງ?'. [27]ຄົນໃຊ້ຈຶ່ງບອກເພິ່ນວ່າ 'ນ້ອງຂອງທ່ານໄດ້ກັບມາແລ້ວແລະພໍ່ຂອງທ່ານໄດ້ຈັດຂ້າງົວ
ໜຸ່ມຕົວອ້ວນພີ ຕ້ອນຮັບລູກທີ່ກັບມາດ້ວຍຄວາມສະຫວັດດີພາບ'. [28]"ຝ່າຍຜູ້ອ້າຍກໍຄຽດເລີຍບໍ່
ຍອມເຂົ້າມາເຮືອນ ທາງພໍ່ກໍໄດ້ອອກໄປອອຍໃຈຊວນເຂົ້າມາ. [29]ແຕ່ລາວໄດ້ຕອບພໍ່ວ່າ 'ເບິ່ງ
ເທາະພໍ່, ລູກໄດ້ປະຕິບັດພໍ່ເໝືອນເປັນຂ້ອຍໃຊ້ໄດ້ຈັກປີມາແລ້ວ ໂດຍບໍ່ໄດ້ລະເມີດຕໍ່ຄຳສັ່ງ-
ສອນຂອງພໍ່ຈັກເທື່ອ ແຕ່ພໍ່ຍັງບໍ່ໃຫ້ລູກແກະແມ່ນແຕ່ໂຕດຽວ ເພື່ອຈະຈັດການລ້ຽງໃຫ້ມິດສະ-
ຫາຍຂອງລູກມາຮ່ວມຊົມຊື່ນຍິນດີນຳ. [30]ແຕ່ເມື່ອລູກຂອງພໍ່ຜູ້ນີ້ ທີ່ເປັນຜູ້ຜານສົມບັດສິ່ງຂອງ
ຂອງພໍ່ດ້ວຍການຄົບກັບພວກຍິງແມ່ຈ້າງນັ້ນໄດ້ມາແລ້ວ ພໍ່ກໍຍັງໄດ້ຂ້າງົວໜຸ່ມໂຕອ້ວນພີຈັດການ

ລ້ຽງມັນ'. [31]ແຕ່ພໍ່ໄດ້ຕອບລູກນັ້ນວ່າ 'ລູກເອີຍ, ຝ່າຍເຈົ້າໄດ້ຢູ່ນຳພໍ່ເລື້ອຍ ສິ່ງຂອງທັງໝົດຂອງ
ພໍ່ກໍເປັນຂອງເຈົ້າ. [32]ແຕ່ສົມຄວນທີ່ພໍ່ຕ້ອງມີຄວາມຊົມຊື່ນຍິນດີ ເພາະນ້ອງຂອງເຈົ້າຄົນນີ້ຕາຍ
ແລ້ວ ແຕ່ມັນໄດ້ກັບຄືນມາອີກ ມັນເສຍແລ້ວ ແຕ່ຍັງໄດ້ພົບອີກ'."

# ບົດທີ 16

## ຄຳອຸປະມາເລື່ອງພະນັກງານບໍ່ສັດຊື່

[1]ພຣະອົງຊົງກ່າວກັບພວກສາວົກຂອງພຣະອົງວ່າ, "ຍັງມີເສດຖີທີ່ມີເຈົ້າພະນັກງານຄົນໜຶ່ງ
ແລະມີຄົນຟ້ອງຕໍ່ເສດຖີວ່າ ພະນັກງານຄົນນັ້ນໄດ້ຜານຊັບຂອງທ່ານເສຍ. [2]ເສດຖີຈິ່ງເອີ້ນພະ-
ນັກງານຄົນນັ້ນມາເວົ້າວ່າ 'ເລື່ອງທີ່ເຮົາໄດ້ຍິນກັບເຈົ້ານັ້ນເປັນຢ່າງໃດ ຈົ່ງລາຍງານກ່ຽວກັບ
ໜ້າທີ່ຂອງເຈົ້າເສຍ ເພາະເຈົ້າຈະເປັນພະນັກງານຕໍ່ໄປອີກບໍ່ໄດ້'. [3]ເຈົ້າພະນັກງານນັ້ນຈິ່ງຄຶດໃນ
ໃຈວ່າ 'ເຮົາຈະເຮັດແນວໃດໜໍ ເພາະນາຍຈະຖອດເຮົາອອກເສຍຈາກໜ້າທີ່ພະນັກງານແລ້ວ
ເຮົາຂຸດດິນກໍບໍ່ມີແຮງ, ຈະຂໍທານກໍອາຍເຂົາ. [4]ເຮົາຮູ້ແລ້ວວ່າຈະເຮັດແນວໃດດີເພື່ອເວລາເຮົາ
ຖືກຖອດຈາກໜ້າທີ່ພະນັກງານແລ້ວ ເຂົາຈະຮັບເຮົາໄວ້ໃນເຮືອນຂອງເຂົາໄດ້'. [5]ລາວຈິ່ງເອີ້ນ
ລູກໜີ້ຂອງນາຍມາທຸກຄົນ ແລ້ວຖາມຜູ້ທຳອິດວ່າ 'ເຈົ້າເປັນໜີ້ນາຍຂອງເຮົາເທົ່າໃດ?'. [6]ຜູ້ນັ້ນ
ກໍຕອບວ່າ 'ເປັນໜີ້ນ້ຳມັນຮ້ອຍຖັງ' ເຈົ້າພະນັກງານນັ້ນຈິ່ງບອກວ່າ 'ເອົາບັນຊີຂອງເຈົ້າ ນັ່ງລົງ
ແລ້ວຈົດໃສ່ຫ້າສິບຖັງໄວໆ ເສຍ'. [7]ແລ້ວກໍຖາມອີກຄົນໜຶ່ງວ່າ 'ເຈົ້າເດ, ເຈົ້າເປັນໜີ້ເທົ່າໃດ?'
ຜູ້ນີ້ຕອບວ່າ 'ເປັນໜີ້ເຂົ້າປຽກຮ້ອຍກຽນ' ເຈົ້າພະນັກງານຈິ່ງບອກວ່າ 'ຈົ່ງເອົາບັນຊີຂອງເຈົ້າມາ
ຈົດໃສ່ແປດສິບກຽນເສຍ'. [8]ແລ້ວເຈົ້ານາຍກໍສັນລະເສີນເຈົ້າພະນັກງານຜູ້ບໍ່ສັດຊື່ວ່າ 'ເພິ່ນໄດ້
ເຮັດດ້ວຍຄວາມສະຫລາດ ດ້ວຍວ່າຄົນຝ່າຍໂລກນີ້ໃນສະໄໝຂອງເຂົາ ເຂົາໃຊ້ສະຕິປັນຍາສະ-
ຫລາດກວ່າຄົນຝ່າຍຄວາມສະຫວ່າງອີກ'. [9]ຝ່າຍເຮົາ ເຮົາບອກທ່ານທັງຫລາຍວ່າ ຈົ່ງເຮັດໃຫ້
ຕົນມີມິດສະຫາຍດ້ວຍຊັບສົມບັດອັນບໍ່ຍຸດຕິທຳ ເພື່ອເວລາຊັບນັ້ນເສຍໄປແລ້ວ ເຂົາຈະໄດ້
ຕ້ອນຮັບພວກທ່ານໄວ້ໃນບ່ອນອາໃສອັນຖາວອນເປັນນິດ.

[10]"ຄົນທີ່ສັດຊື່ໃນຂອງເລັກນ້ອຍກໍສັດຊື່ໃນຂອງຫລາຍ ແລະຄົນທີ່ບໍ່ສັດຊື່ໃນຂອງເລັກນ້ອຍກໍ
ບໍ່ສັດຊື່ໃນຂອງຫລາຍເໝືອນກັນ. [11]ເຫດສັນນັ້ນຖ້າພວກທ່ານບໍ່ໄດ້ສະແດງຕົວເປັນຄົນສັດຊື່ໃນ
ຊັບສົມບັດອັນບໍ່ຍຸດຕິທຳ ໃຜຈະມອບຊັບສົມບັດອັນທ່ຽງແທ້ໃຫ້ພວກທ່ານ. [12]ແລະຖ້າພວກທ່ານ
ບໍ່ໄດ້ສະແດງຕົວເປັນຄົນສັດຊື່ໃນສິ່ງຂອງຂອງຄົນອື່ນ ໃຜຈະມາມອບສິ່ງຂອງຂອງທ່ານໃຫ້ແກ່
ທ່ານ. [13]ບໍ່ມີຜູ້ໃດສາມາດເປັນຂ້ອຍສອງເຈົ້າບ່າວສອງນາຍໄດ້ ເພາະຈະຊັງນາຍຜູ້ນີ້ ແລ້ວໄປ
ຮັກນາຍຜູ້ນັ້ນ ຫລືຈະຕິດພັນກັບນາຍຜູ້ນີ້ ແລະປະໝາດນາຍຜູ້ນັ້ນ ທ່ານຈະເປັນຂ້ອຍໃຊ້ຂອງ
ພຣະເຈົ້າແລະເປັນຂ້ອຍໃຊ້ຂອງເງິນຄຳພ້ອມກັນບໍ່ໄດ້."

## ເລື່ອງພຣະບັນຍັດແລະລາຊະອານາຈັກຂອງພຣະເຈົ້າ

[14]ຝ່າຍພວກຟາຣີຊາຍທີ່ມີໃຈຮັກຊັບ ເມື່ອໄດ້ຍິນຄຳເຫລົ່ານັ້ນແລ້ວກໍກ່າວເຍາະເຍີ້ຍພຣະອົງ.
[15]ແຕ່ພຣະອົງກ່າວຕໍ່ເຂົາວ່າ, "ທ່ານທັງຫລາຍອ້າງຕົວວ່າເປັນຄົນຊອບທຳຕໍ່ໜ້າມະນຸດ ແຕ່
ພຣະເຈົ້າຊົງຊາບໃຈພວກທ່ານ ດ້ວຍວ່າຊຶ່ງເປັນທີ່ນັບໜ້າຖືຕາໃນຖ້າມກາງມະນຸດ ກໍເປັນທີ່

ກຽດຊັງຈຳເພາະພຣະພັກ ພຣະເຈົ້າ.
[16]“ມີພຣະບັນຍັດແລະຜູ້ປະກາດພຣະທຳຈົນເຖິງສະໄໝ ໂຢຮັນ ຕັ້ງແຕ່ນັ້ນມາເຂົາກໍປະກາດ
ຂ່າວປະເສີດເລື່ອງ ລາຊະແຜ່ນດິນຂອງພຣະເຈົ້າ ແລະຄົນທັງປວງກໍຍາດກັນເຂົ້າໃນລາຊະ
ແຜ່ນດິນນັ້ນ. [17]ຟ້າແລະດິນຈະລ່ວງໄປ ກໍງ່າຍກວ່າທີ່ພຣະບັນຍັດແຕ່ຈຸດດຽວຈະເປັນໂມຄະ.

## ຊົງສອນເລື່ອງການຢ່າຮ້າງ

*(ມທ 19:1-12; ມຣກ 10:11-12)*

[18]“ທຸກຄົນທີ່ຢ່າຮ້າງເມຍຂອງຕົນ ແລ້ວໄປເອົາເມຍໃໝ່ກໍຜິດຖານຫລິ້ນຊູ້ ແລະທຸກຄົນທີ່ເອົາ
ຍິງແມ່ຮ້າງມາເປັນເມຍກໍຜິດຖານຫລິ້ນຊູ້ເໝືອນກັນ.

## ເລື່ອງເສດຖີກັບລາຊະໂຣ

[19]“ຍັງມີເສດຖີຄົນໜຶ່ງນຸ່ງຫົ່ມເສື້ອສີມ່ວງອ່ອນແລະຜ້າປ່ານເນື້ອລະອຽດ ປິຕິຍິນດີດ້ວຍອາ-
ຫານການກິນຢ່າງປະນີດທຸກໆ ວັນ. [20]ແລະມີຄົນຍາກຈົນຜູ້ໜຶ່ງຊື່ລາຊະໂຣ ເປັນບາດເຕັມຕົວ
ທີ່ເຂົາຫາມມາຖິ້ມໄວ້ທີ່ປະຕູບ້ານເສດຖີ. [21]ລາຊະໂຣຢາກກິນຂອງທີ່ຕົກຈາກໂຕະຂອງເສດຖີ
ນັ້ນໃຫ້ອີ່ມ ແລະຫລາຍກວ່ານັ້ນໝາກໍຍັງມາເລຍບາດຂອງລາວ.
[22]ຢູ່ມາຄົນຍາກຈົນຜູ້ນັ້ນກໍຕາຍ ແລະຝູງເທວະດາໄດ້ຮັບເອົາໄປໄວ້ໃນເອິກຂອງອັບຣາຮາມ
ຝ່າຍເສດຖີນັ້ນກໍຕາຍເໝືອນກັນ ແລ້ວເຂົາກໍຝັງໄວ້. [23]ເມື່ອຢູ່ໃນແດນມໍລະນາກໍເປັນທຸກເວທະ-
ນາຫລາຍ ເສດຖີນັ້ນຈຶ່ງເງີຍຕາຂຶ້ນເຫັນອັບຣາຮາມຢູ່ໄກ ແລະເຫັນລາຊະໂຣຢູ່ໃນເອິກຂອງ
ທ່ານ. [24]“ແລ້ວເສດຖີຈຶ່ງຮ້ອງວ່າ ‘ອັບຣາຮາມ ບິດາເອີຍ, ຂໍເອັນດູຂ້ານ້ອຍແດ່ທ້ອນ ຂໍຈົ່ງໃຫ້
ລາຊະໂຣມາ ເພື່ອຈະໄດ້ເອົາປາຍນິ້ວມືຈຸ່ມນ້ຳມາແປະໃສ່ລີ້ນຂ້ານ້ອຍໃຫ້ຊຸ່ມເຢັນດ້ວຍວ່າຂ້າ-
ນ້ອຍກຳລັງທົນທຸກທໍລະມານຢູ່ໃນແປວໄຟນີ້’. [25]ແຕ່ອັບຣາຮາມຕອບວ່າ, ‘ລູກເອີຍ, ເຈົ້າຈົ່ງ
ລະນຶກວ່າເມື່ອເຈົ້າຍັງມີຊີວິດຢູ່ ເຈົ້າໄດ້ຮັບຂອງດີສຳລັບຕົວແລະລາຊະໂຣໄດ້ຮັບຂອງບໍ່ດີ ຢ່າງ
ດຽວກັນນັ້ນແຫລະ, ບັດນີ້ລາຊະໂຣໄດ້ຮັບຄວາມເລົ້າໂລມຢູ່ທີ່ນີ້ ແລະເຈົ້າໄດ້ຮັບຄວາມທຸກທໍ-
ລະມານ. [26]ນອກນັ້ນອີກ, ລະຫວ່າງພວກເຮົາກັບພວກເຈົ້າຍັງມີເຫວອັນໃຫຍ່ຊຶ່ງຊົງຕັ້ງຂວາງຢູ່
ເພື່ອວ່າຖ້າຜູ້ໃດທີ່ປາດຖະໜາຈະຂ້າມທີ່ນີ້ໄປເຖິງພວກເຈົ້າກໍບໍ່ໄດ້ ຫລືບໍ່ໃຫ້ເຂົາຂ້າມຈາກທີ່ນັ້ນ
ມາເຖິງພວກເຮົາ’. [27]ເສດຖີນັ້ນຈຶ່ງເວົ້າວ່າ ‘ບິດາເອີຍ, ຖ້າຢ່າງນັ້ນ ຂໍທ່ານໃຊ້ລາຊະໂຣໄປຍັງ
ເຮືອນພໍ່ຂອງຂ້ານ້ອຍ. [28]ເພາະວ່າຂ້ານ້ອຍມີອ້າຍນ້ອງຫ້າຄົນ ເພື່ອໃຫ້ລາຊະໂຣໄປຕັກເຕືອນ
ເຂົາ ເພາະຢ້ານວ່າເຂົາຈະເຂົ້າມາໃນບ່ອນທໍລະມານນີ້ ເໝືອນກັນ’. [29]ແຕ່ອັບຣາຮາມຕອບວ່າ
‘ເຂົາມີໂມເຊ ແລະພວກຜູ້ປະກາດພຣະທຳແລ້ວ ໃຫ້ເຂົາຟັງຄົນເຫລົ່ານັ້ນສາ’. [30]ເສດຖີຈຶ່ງຕອບ
ວ່າ ‘ອັບຣາຮາມ ບິດາເອີຍ, ບໍ່ແມ່ນຢ່າງນັ້ນດອກ ແຕ່ຖ້າຄົນໜຶ່ງຈາກໝູ່ຄົນຕາຍໄປຫາເຂົາ
ເຂົາຄົງຈະຖິ້ມໃຈເກົ່າເອົາໃຈໃໝ່’. [31]ອັບຣາຮາມຈຶ່ງຕອບວ່າ ‘ຖ້າເຂົາບໍ່ຟັງໂມເຊ ແລະພວກຜູ້
ປະກາດພຣະທຳ ເຖິງຈະມີຄົນໜຶ່ງຄືນມາຈາກຕາຍ ເຂົາກໍບໍ່ຍອມເຊື່ອເໝືອນກັນ’.”

# ບົດທີ 17

## ເຫດໃຫ້ຫລົງຜິດ

*(ມທ 18:6-7; 21-22; ມຣກ 9:42)*

1ພຣະອົງຊົງກ່າວກັບພວກສາວົກຂອງພຣະອົງວ່າ, "ຈຳເປັນຕ້ອງມີເຫດໃຫ້ເກີດການຫລົງຜິດ
ແຕ່ວິບັດແກ່ຜູ້ທີ່ກໍ່ເຫດໃຫ້ເກີດການຫລົງຜິດນັ້ນ. 2ຖ້າຈະເອົາຫີນໂມ້ກ້ອນໃຫຍ່ຜູກຄໍຄົນນັ້ນຈົມ
ນ້ຳທະເລເສຍ ກໍດີກວ່າທີ່ຈະເຮັດໃຫ້ຄົນໜຶ່ງໃນໝູ່ເລັກນ້ອຍເຫລົ່ານີ້ເກີດການຫລົງຜິດ. 3ຈົ່ງ
ລະວັງໃຫ້ດີ"ຖ້າພີ່ນ້ອງເຮັດຜິດບາບ ຈົ່ງຕິຕຽນເພິ່ນ ຖ້າເພິ່ນຫລົບຕັ້ງໃຈໃໝ່ ຈົ່ງຍົກໂທດໃຫ້
ເພິ່ນ. 4ຖ້າແມ່ນເພິ່ນເຮັດຜິດຕໍ່ທ່ານວັນລະເຈັດເທື່ອ ແລະກັບມາຫາທ່ານທັງເຈັດເທື່ອນັ້ນ ແລ້ວ
ເວົ້າວ່າ 'ເຮົາກິນແໜງຕັ້ງໃຈໃໝ່ແລ້ວ' ຈົ່ງຍົກໂທດໃຫ້ເພິ່ນ."

## ເລື່ອງອຳນາດແຫ່ງຄວາມເຊື່ອ

5ຝ່າຍອັກຄະສາວົກໄດ້ທູນຕໍ່ອົງພຣະຜູ້ເປັນເຈົ້າວ່າ, "ຂໍໂຜດຕື່ມໃຫ້ພວກຂ້ານ້ອຍມີຄວາມ
ເຊື່ອຫລາຍກວ່າອີກ." 6ອົງພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ, "ຖ້າພວກທ່ານມີຄວາມເຊື່ອທໍ່ແກ່ນ
ຜັກກາດເມັດໜຶ່ງ ທ່ານຈະບອກກົກມອນກົກນີ້ໄດ້ວ່າ 'ຈົ່ງຖອນຂຶ້ນອອກໄປປັກຢູ່ໃນທະເລ' ມັນ
ກໍຈະຟັງຄວາມທ່ານ.

## ໜ້າທີ່ຂອງຄົນໃຊ້

7"ໃນພວກທ່ານທີ່ມີຂ້ອຍໃຊ້ໄຖນາຫລືລ້ຽງແກະ ເມື່ອຂ້ອຍໃຊ້ນັ້ນກັບມາແຕ່ທົ່ງໃຜຈະກ່າວແກ່
ຂ້ອຍໃຊ້ນັ້ນວ່າ 'ຈົ່ງເຂົ້າມານັ່ງໂຕະໂລດ'. 8ຈະບໍ່ບອກຂ້ອຍໃຊ້ນັ້ນຫລືວ່າ 'ຈົ່ງຈັດແຈງໃຫ້ເຮົາ
ກິນແລງແລະຄາດແອວໄວ້ປະຕິບັດເຮົາ ຈົນເຖິງເຮົາກິນແລະດື່ມອີ່ມແລ້ວ ແລະພາຍຫລັງເຈົ້າ
ຈຶ່ງຄ່ອຍກິນແລະດື່ມ'. 9ນາຍບໍ່ຕ້ອງຂອບໃຈຕໍ່ຂ້ອຍໃຊ້ນັ້ນດອກຕີ້ ເພາະມັນໄດ້ເຮັດຕາມຄຳສັ່ງ.
10ສຳລັບພວກທ່ານກໍເໝືອນກັນນັ້ນແຫລະ ຄືເມື່ອພວກທ່ານໄດ້ເຮັດຕາມທຸກສິ່ງທີ່ຊົງສັ່ງໄວ້ນັ້ນ
ພວກທ່ານຈົ່ງເວົ້າວ່າ 'ພວກຂ້ານ້ອຍເປັນຂ້ອຍໃຊ້ທີ່ບໍ່ມີປະໂຫຍດ ພວກຂ້ານ້ອຍພຽງແຕ່ໄດ້ເຮັດ
ຕາມໜ້າທີ່ຂອງພວກຂ້ານ້ອຍເທົ່ານັ້ນ'."

## ຊົງໂຜດຄົນຂີ້ທູດສິບຄົນໃຫ້ດີສະອາດ

11ເມື່ອພຣະອົງກຳລັງສະເດັດຂຶ້ນເມືອງກຸງເຢຣູຊາເລັມ ພຣະອົງໄດ້ສະເດັດຜ່ານແຂວງຊາ-
ມາເຣຍແລະແຂວງຄາລິເລ. 12ເມື່ອພຣະອົງສະເດັດເຂົ້າໄປໃນບ້ານໜຶ່ງມີຊາຍຂີ້ທູດສິບຄົນມາ
ພົບພຣະອົງຢືນຢູ່ແຕ່ໄກ. 13ເຂົາໄດ້ຮ້ອງຂຶ້ນວ່າ, "ເຢຊູຜູ້ເປັນອາຈານເຈົ້າເອີຍ, ຂໍເມດຕາພວກ
ຂ້ານ້ອຍແດ່ທ້ອນ!". 14ເມື່ອພຣະອົງຊົງເຫັນແລ້ວຈຶ່ງກ່າວແກ່ເຂົາວ່າ, "ຈົ່ງໄປສະແດງຕົວຕໍ່ພວກ
ປະໂລຫິດ" ເມື່ອກຳລັງອອກຈາກບ່ອນນັ້ນໄປເຂົາກໍດີສະອາດແລ້ວ. 15ສ່ວນຄົນໜຶ່ງໃນພວກນັ້ນ
ເມື່ອເຫັນວ່າຕົວດີພະຍາດແລ້ວ ກໍກັບມາກ່າວສັນລະເສີນພຣະເຈົ້າດ້ວຍສຽງອັນດັງ. 16ແລະ
ຂາບລົງທີ່ພຣະບາດຂອງພຣະເຢຊູ ໂມທະນາພຣະຄຸນຂອງພຣະອົງ ຄົນນັ້ນເປັນໄທຊາມາ-
ເຣຍ. 17ພຣະເຢຊູຊົງຖາມຜູ້ນັ້ນວ່າ, "ມີສິບຄົນທີ່ດີສະອາດ ບໍ່ແມ່ນຫລື ແຕ່ເກົ້າຄົນນັ້ນຢູ່ໃສ?
18ບໍ່ເຫັນຜູ້ໃດກັບມາຖວາຍພຣະກຽດແດ່ພຣະເຈົ້າ ເວັ້ນໄວ້ແຕ່ຄົນຕ່າງຊາດຜູ້ນີ້." 19ແລ້ວພຣະ-
ອົງຊົງບອກຜູ້ນັ້ນວ່າ, "ຈົ່ງລຸກຂຶ້ນໄປເທີນ ຄວາມເຊື່ອຂອງເຈົ້າໄດ້ຊ່ອຍໃຫ້ເຈົ້າດີແລ້ວ."

## ການມາປະກົດແຫ່ງລາຊະອານາຈັກຂອງພຣະເຈົ້າ

*(ມທ 24:23-28, 37-41)*

[20]ເມື່ອພວກ ຟາຣີຊາຍ ໄດ້ທູນຖາມພຣະອົງວ່າ, "ລາຊະອານາຈັກຂອງ ພຣະເຈົ້າ ຈະມາເຖິງ
ເມື່ອໃດ?" ພຣະອົງຊົງຕອບເຂົາວ່າ, "ລາຊະອານາຈັກຂອງ ພຣະເຈົ້າ ບໍ່ມາປະກົດໃຫ້ເຫັນຢ່າງ
ສັງເກດໄດ້.[ກ] [21]ແລະເຂົາຈະບໍ່ເວົ້າວ່າ 'ເບິ່ງແມ! ຢູ່ທີ່ນີ້ ຫລືຢູ່ທີ່ນັ້ນ' ເພາະເບິ່ງແມ! ລາຊະ
ອານາຈັກຂອງ ພຣະເຈົ້າ ຢູ່ຖ້າມກາງ[ຂ] ທ່ານທັງຫລາຍ."

[22]ພຣະອົງຊົງກ່າວກັບພວກສາວົກວ່າ, "ຄົງຈະມີເວລາໜຶ່ງ ທີ່ທ່ານທັງຫລາຍຈະປາດຖະໜາ
ເຫັນວັນຂອງບຸດມະນຸດຈັກວັນໜຶ່ງ ແຕ່ຈະບໍ່ເຫັນ. [23]ເຂົາຈະເວົ້າກັບທ່ານທັງຫລາຍວ່າ 'ມາເບິ່ງ
ນີ້ແມ!' ຫລື 'ໄປເບິ່ງພຸ້ນແມ!' ແຕ່ຢ່າອອກໄປ ຢ່າຕິດຕາມເຂົາ. [24]ດ້ວຍວ່າປຽບເໝືອນຟ້າແມບ
ເມື່ອແມບອອກຈາກຟ້າເບື້ອງໜຶ່ງ ກໍສ່ອງສະຫວ່າງໄປເຖິງອີກເບື້ອງໜຶ່ງ ບຸດມະນຸດກໍຈະເປັນ
ຢ່າງນັ້ນແຫລະ ໃນວັນຂອງຕົນ. [25]ກ່ອນນັ້ນຈຳເປັນທີ່ພຣະອົງຈະຕ້ອງທົນທຸກທໍລະມານຫລາຍ
ປະການ ແລະຄົນສະໄໝນີ້ຈະບໍ່ຍອມຮັບພຣະອົງ. [26]ເຫດການໃນສະໄໝຂອງ ໂນອາ ເປັນມາ
ແລ້ວຢ່າງໃດ ໃນສະໄໝຂອງບຸດມະນຸດກໍຈະເປັນຢ່າງນັ້ນແຫລະ. [27]ເຂົາໄດ້ກິນໄດ້ດື່ມ, ໄດ້
ແຕ່ງງານແລະຍົກໃຫ້ເປັນຜົວເມຍກັນ ຈົນເຖິງວັນທີ່ ໂນອາ ໄດ້ເຂົ້າໄປໃນນາວາ ແລະນ້ຳໄດ້ມາ
ຖ້ວມລ້າງຜານໃຫ້ເຂົາຈິບຫາຍໄປໝົດ. [28]ໃນສະໄໝຂອງ ໂລດ ກໍເໝືອນກັນ ເຂົາໄດ້ກິນໄດ້ດື່ມ,
ໄດ້ຊື້ໄດ້ຂາຍ, ໄດ້ປູກຝັງໄດ້ກໍ່ສ້າງ. [29]ແຕ່ໃນວັນທີ່ ໂລດ ໄດ້ອອກໄປຈາກເມືອງ ໂຊໂດມ ໄຟ
ແລະມາດໄດ້ຕົກມາເຜົາຜານໃຫ້ເຂົາຈິບຫາຍໄປໝົດ. [30]ໃນວັນທີ່ບຸດມະນຸດຈະມາປະກົດກໍຈະ
ເປັນຢ່າງນັ້ນ. [31]ໃນວັນນັ້ນຄົນທີ່ຢູ່ເທິງຫລັງຄາເຮືອນແລະມີສິ່ງຂອງຢູ່ໃນເຮືອນ ກໍຢ່າລົງມາ
ເພື່ອເກັບເອົາສິ່ງຂອງເຫລົ່ານັ້ນ ແລະຄົນທີ່ຢູ່ທົ່ງນາກໍຢ່າຕ່າວຄືນມາເໝືອນກັນ. [32]ຈົ່ງລະນຶກ
ເຖິງພັນລະຍາຂອງ ໂລດ ເທີນ! [33]ຜູ້ໃດພະຍາຍາມຮັກສາຊີວິດສຳລັບຕົນເອງ ຜູ້ນັ້ນຈະເສຍຊີວິດ
ແຕ່ຜູ້ໃດຍອມເສຍຊີວິດ ຜູ້ນັ້ນຮັກສາຊີວິດໃຫ້ພົ້ນ. [34]ເຮົາບອກທ່ານທັງຫລາຍວ່າ ໃນຄືນວັນນັ້ນ
ຈະມີຊາຍສອງຄົນນອນຢູ່ຕຽງດຽວ ຈະຊົງຮັບຄົນໜຶ່ງໄປ ຈະຊົງປະຄົນໜຶ່ງໄວ້. [35]ຈະມີຍິງສອງ
ຄົນກຳລັງໂມ້ແປ້ງຢູ່ນຳກັນ ຈະຊົງຮັບຄົນໜຶ່ງໄປ ຈະຊົງປະຄົນໜຶ່ງໄວ້. [36][ຈະມີຊາຍສອງຄົນຢູ່
ທົ່ງນາ ຈະຊົງຮັບຄົນໜຶ່ງໄປ ຈະຊົງປະຄົນໜຶ່ງໄວ້).]"

[37]ແລ້ວເຂົາຈຶ່ງທູນພຣະອົງວ່າ, "ຈະເກີດຂຶ້ນຢູ່ບ່ອນໃດ, ນາຍເອີຍ?" ພຣະອົງຊົງຕອບວ່າ,
"ຊາກສົບຢູ່ບ່ອນໃດ ຝູງແຮ້ງກໍຈະຕອມຢູ່ບ່ອນນັ້ນ."

# ບົດທີ 18

## ຄຳອຸປະມາເລື່ອງຍິງແມ່ໝ້າຍແລະຕຸລາການ

[1]ພຣະອົງຊົງກ່າວຄຳອຸປະມາເລື່ອງໜຶ່ງໃຫ້ເຂົາຟັງ ເພື່ອສອນເຂົາວ່າຄວນໄຫວ້ວອນຢູ່ສະເໝີ
ບໍ່ໃຫ້ອ່ອນກຳລັງໃຈ. [2]ພຣະອົງຊົງກ່າວວ່າ, "ໃນເມືອງໜຶ່ງມີຕຸລາການຜູ້ໜຶ່ງທີ່ບໍ່ຢຳເກງ ພຣະ-
ເຈົ້າ ແລະບໍ່ນັບຖືມະນຸດ. [3]ໃນເມືອງນັ້ນມີແມ່ໝ້າຍຜູ້ໜຶ່ງໝັ່ນມາຫາຕຸລາການຜູ້ນັ້ນ ໂດຍເລົ່າວ່າ

---

[ກ]ຫລືວ່າ "ບໍ່ປາກົດເປັນການສະແດງຢ່າງເປີດເຜີຍ" ຫລືວ່າ "ບໍ່ມີທາງປາກົດແກ່ຕາ." [ຂ]ຫລືວ່າ "ຢູ່ພາຍ
ນອກ."

'ຂໍຕັດສິນດ້ວຍຍຸດຕິທຳ ໃຫ້ຂ້ານ້ອຍພົ້ນຈາກຄູ່ຄວາມຂອງຂ້ານ້ອຍແດ່ທ້ອນ!'. [4]ຝ່າຍຕຸລາການ
ຜູ້ນັ້ນ, ເມື່ອທີວທີກໍບໍ່ຍອມເຮັດຕາມ ແຕ່ພາຍລຸນມາທ່ານກໍນຶກໃນໃຈວ່າ 'ແມ່ນວ່າເຮົາບໍ່ຢຳເກງ
ພຣະເຈົ້າ ແລະບໍ່ນັບຖືມະນຸດກໍດີ. [5]ແຕ່ເພາະແມ່ໝ້າຍຄົນນີ້ມາກວນໃຈເຮົາ ເຮົາຈະໃຫ້ຄວາມ
ຍຸດຕິທຳແກ່ນາງ ຢ້ານວ່ານາງຈະມາຢູ່ເລື້ອຍ ເຮັດໃຫ້ເຮົາເສຍກຳລັງໃຈ'." [6]ແລ້ວອົງພຣະຜູ້-
ເປັນເຈົ້າຊົງກ່າວວ່າ, "ຈົ່ງຟັງຄຳທີ່ຕຸລາການຜູ້ບໍ່ຍຸດຕິທຳຄົນນີ້ໄດ້ເວົ້າ. [7]ຝ່າຍຄົນທັງຫລາຍທີ່
ພຣະເຈົ້າໄດ້ຊົງເລືອກໄວ້ ຊຶ່ງຮ້ອງຫາພຣະອົງທັງກາງເວັນແລະກາງຄືນນັ້ນ ເຖິງແມ່ນວ່າພຣະ-
ອົງຈະຊົງຊ້ານານໃນການຂອງເຂົາກໍຕາມ ພຣະອົງຈະບໍ່ຊົງໂຜດຄວາມ ຍຸດຕິທຳແກ່ເຂົາຫລື.
[8]ເຮົາບອກທ່ານທັງຫລາຍວ່າ ພຣະອົງຈະຊົງໂຜດຄວາມຍຸດຕິທຳໃຫ້ແກ່ເຂົາໂດຍໄວ ແຕ່ເຖິງ
ປານນັ້ນ, ເມື່ອບຸດມະນຸດມາເພິ່ນຈະພົບຄວາມເຊື່ອຢູ່ໃນໂລກຫລື."

## ຄຳອຸປະມາເລື່ອງຄົນຟາຣີຊາຍແລະຄົນເກັບພາສີ

[9]ສຳລັບລາງຄົນທີ່ໄວ້ໃຈໃນຕົວເອງວ່າເປັນຄົນຊອບທຳ ແລະໝິ່ນປະໝາດຄົນອື່ນນັ້ນ ພຣະ-
ອົງຊົງກ່າວຄຳອຸປະມາຂໍ້ນີ້ວ່າ. [10]"ມີຊາຍສອງຄົນຂຶ້ນໄປໄຫວ້ວອນໃນບໍລິເວນພຣະວິຫານ ຜູ້
ໜຶ່ງເປັນຝ່າຍຟາຣີຊາຍ ແລະຄົນໜຶ່ງເປັນຄົນເກັບພາສີ. [11]ຟາຣີຊາຍຄົນນັ້ນຢືນຢູ່ນຶກໃນໃຈຂອງ
ຕົນໄຫວ້ວອນວ່າ 'ຂ້າແດ່ພຣະເຈົ້າ, ຂ້າພະອົງຂໍໂມທະນາຂອບພຣະຄຸນພຣະອົງ ທີ່ຂ້າພະອົງບໍ່
ເໝືອນຄົນອື່ນ ຊຶ່ງເປັນຄົນໂລບ, ຄົນບໍ່ຍຸດຕິທຳ, ຄົນຫລິ້ນຊູ້ສູ່ຜົວເມຍ ແລະບໍ່ເໝືອນຄົນເກັບ
ພາສີຜູ້ນີ້. [12]ໃນລະຫວ່າງອາທິດໜຶ່ງຂ້າພຣະອົງຖືສິນອົດອາຫານສອງເທື່ອ ຂອງທຸກສິ່ງທີ່ຂ້າ
ພຣະອົງຫາມາໄດ້ ຂ້າພຣະອົງແບ່ງເປັນສິບສ່ວນ ຖວາຍໜຶ່ງສ່ວນ'. [13]ສ່ວນຄົນເກັບພາສີຜູ້ນັ້ນ
ຢືນຢູ່ແຕ່ໄກ ບໍ່ຫານເງີຍໜ້າເບິ່ງຟ້າ ແຕ່ຕີເອິກຂອງຕົນກ່າວວ່າ, 'ຂ້າແດ່ພຣະເຈົ້າ ຂໍຊົງໂຜດ
ພຣະເມດຕາແກ່ຂ້າພຣະອົງ ຜູ້ເປັນຄົນບາບແດ່ທ້ອນ!'. [14]ເຮົາບອກທ່ານທັງຫລາຍວ່າ ຄົນນີ້
ແຫລະ, ເມື່ອກັບລົງໄປຍັງເຮືອນຂອງຕົນ ກໍຊົງນັບວ່າຊອບທຳຫລາຍກວ່າຄົນອື່ນນັ້ນ ເພາະວ່າ
ທຸກຄົນທີ່ຍົກຕົວຂຶ້ນຈະຖືກຖອຍລົງ ແຕ່ຜູ້ທີ່ໄດ້ຖ່ອມຕົວລົງຈະຖືກຍົກຂຶ້ນ."

## ຊົງອວຍພຣະພອນແກ່ເດັກນ້ອຍ

*(ມທ 19:13-15; ມຣກ 10:13-16)*

[15]ແລ້ວເຖິງແມ່ນພວກລູກອ່ອນນ້ອຍເຂົາກໍໄດ້ອູ້ມມາຫາພຣະອົງ ເພື່ອຈະໃຫ້ພຣະອົງຊົງຢຽດ
ພຣະຫັດໃສ່ເຂົາ ແຕ່ເມື່ອພວກສາວົກເຫັນກໍຫ້າມໄວ້. [16]ແຕ່ພຣະເຢຊູຊົງເອີ້ນເຂົາມາຫາ ແລ້ວ
ຊົງກ່າວວ່າ, "ຈົ່ງປ່ອຍໃຫ້ເດັກນ້ອຍມາຫາເຮົາ ຢ່າຊູ່ຫ້າມເຂົາ ເພາະວ່າລາຊະແຜ່ນດິນຂອງ
ພຣະເຈົ້າເປັນຂອງ[ກ] ຄົນທີ່ເປັນເໝືອນເດັກນ້ອຍນີ້ແຫລະ. [17]ເຮົາບອກພວກທ່ານຕາມຄວາມ
ຈິງວ່າ ຖ້າຜູ້ໃດບໍ່ຮັບເອົາລາຊະແຜ່ນດິນຂອງພຣະເຈົ້າເໝືອນດັ່ງເດັກນ້ອຍ ຜູ້ນັ້ນຈະເຂົ້າໃນ
ລາຊະແຜ່ນດິນຂອງພຣະເຈົ້ານັ້ນບໍ່ໄດ້ຈັກເທື່ອ."

## ເລື່ອງເສດຖີໜຸ່ມ

*(ມທ 19:16-30; ມຣກ 10:17-31)*

[18]ມີເຈົ້ານາຍຜູ້ໜຶ່ງທູນຖາມພຣະອົງວ່າ, "ອາຈານຜູ້ປະເສີດເອີຍ, ຂ້ານ້ອຍຈະຕ້ອງເຮັດ

[ກ]ພາສາເດີມອາດຈະໝາຍຄວາມວ່າ "ເປັນກຳມະສິດຂອງ" ຫລືວ່າ "ເປັນທີ່ປະກອບດ້ວຍ".

ແນວໃດ ຈຶ່ງຈະໄດ້ຮັບຊີວິດອັນຕະຫລອດໄປເປັນນິດມາເປັນມໍລະດົກ?". [19]ພຣະເຢຊູຊົງຕອບ
ວ່າ, "ເປັນຫຍັງທ່ານຈຶ່ງເອີ້ນເຮົາວ່າຜູ້ປະເສີດ ບໍ່ມີໃຜປະເສີດ ເວັ້ນແຕ່ພຣະເຈົ້າອົງດຽວເທົ່າ
ນັ້ນ. [20]ທ່ານຮູ້ຈັກຂໍ້ພຣະບັນຍັດແລ້ວຊຶ່ງວ່າ 'ຢ່າມິດສາຈານຈາກຜົວຈາກເມຍ, ຢ່າຂ້າກັນ, ຢ່າ
ລັກຊັບ, ຢ່າເປັນພະຍານບໍ່ຈິງ, ຈົ່ງນັບຖືບິດາມານດາຂອງຕົນ'." [21]ຄົນນັ້ນທູນຕອບວ່າ, "ຂໍ້
ເຫລົ່ານີ້ຂ້ານ້ອຍໄດ້ຖືຮັກສາໄວ້ຕັ້ງແຕ່ເປັນເດັກນ້ອຍມາ." [22]ເມື່ອພຣະເຢຊູຊົງໄດ້ຍິນດັ່ງນັ້ນຈຶ່ງ
ຊົງກ່າວແກ່ຄົນນັ້ນວ່າ, "ທ່ານຍັງຂາດສິ່ງໜຶ່ງ ຄືຈົ່ງໄປຂາຍບັນດາສິ່ງຂອງຊຶ່ງທ່ານມີຢູ່ແຈກ
ທານແກ່ຄົນອະນາຖາ ແລ້ວທ່ານຈະມີຊັບສົມບັດໃນສະຫວັນ ແລະຈົ່ງຕາມເຮົາມາເສຍ." [23]ແຕ່
ເມື່ອໄດ້ຍິນດັ່ງນັ້ນ, ຄົນນັ້ນກໍທຸກໜັກໃຈຫລາຍ ເພາະວ່າຕົນເປັນຄົນຮັ່ງມີຫລາຍ. [24]ເມື່ອພຣະ-
ເຢຊູຊົງເຫັນຄົນນັ້ນມີອາການດັ່ງກ່າວພຣະອົງຈຶ່ງຊົງກ່າວວ່າ, "ທີ່ຄົນຮັ່ງມີຈະເຂົ້າໃນລາຊະ
ແຜ່ນດິນຂອງພຣະເຈົ້າກໍຍາກແທ້ໜໍ! [25]ເພາະວ່າໂຕໂອດໂອຈະລອດຮູເຂັມ ກໍງ່າຍກວ່າຄົນ
ຮັ່ງມີຈະເຂົ້າໃນລາຊະແຜ່ນດິນຂອງພຣະເຈົ້າ." [26]ຝ່າຍຄົນທັງຫລາຍທີ່ໄດ້ຍິນຈຶ່ງເວົ້າວ່າ, "ຖ້າ
ດັ່ງນັ້ນໃຜຈະລອດພົ້ນໄດ້?". [27]ແຕ່ພຣະອົງຊົງຕອບວ່າ, "ສິ່ງທີ່ມະນຸດເຮັດບໍ່ໄດ້ຝ່າຍພຣະເຈົ້າ
ຊົງເຮັດໄດ້." [28]ເປໂຕທູນວ່າ, "ເບິ່ງແມ! ຂ້ານ້ອຍທັງຫລາຍໄດ້ສະຫລະຍ້າວເຮືອນຂອງພວກ
ຂ້ານ້ອຍຕິດຕາມທ່ານມາ." [29]ພຣະອົງຊົງກ່າວກັບເຂົາວ່າ, "ເຮົາບອກທ່ານທັງຫລາຍຕາມ
ຄວາມຈິງວ່າ ຖ້າຜູ້ໃດໄດ້ສະຫລະຍ້າວເຮືອນ, ເມຍ, ອ້າຍນ້ອງ, ພໍ່ແມ່, ຫລືລູກເຕົ້າ ເພາະ
ເຫັນແກ່ລາຊະແຜ່ນດິນຂອງພຣະເຈົ້າແລ້ວ. [30]ໃນໂລກນີ້ຜູ້ນັ້ນຈະໄດ້ຮັບຕອບແທນຫລາຍທໍ່
ແລະໃນໂລກໜ້າຈະໄດ້ຊີວິດອັນຕະຫລອດໄປເປັນນິດ."

## ຊົງທຳນວາຍເຖິງການສິ້ນພຣະຊົນຂອງພຣະອົງເປັນຄັ້ງທີສາມ

*(ມທ 20:17-19; ມຣກ 10:32-34)*

[31]ພຣະອົງຊົງພາພວກສິບສອງຄົນໄປ ແລ້ວຊົງກ່າວແກ່ເຂົາວ່າ, "ເບິ່ງແມ! ພວກເຮົາກຳລັງ
ຂຶ້ນເມືອກຸງເຢຣູຊາເລັມ ແລະສິ່ງສາລະພັດຊຶ່ງພວກຜູ້ປະກາດພຣະທຳໄດ້ຂຽນໄວ້ເຖິງບຸດມະ-
ນຸດຈະສຳເລັດ. [32]ດ້ວຍວ່າເຂົາຈະມອບບຸດມະນຸດໄວ້ກັບຄົນຕ່າງຊາດ ແລະເຂົາຈະເຍາະເຍີ້ຍ
ເພິ່ນ ຈະກ່າວຄວາມຫຍາບຊ້າແລະຖົ່ມນ້ຳລາຍໃສ່ເພິ່ນ. [33]ເຂົາຈະຂ້ຽນຕີແລະຂ້າເພິ່ນເສຍ
ແລ້ວໃນວັນຖ້ວນສາມເພິ່ນຈະຖືກຊົງບັນດານໃຫ້ເປັນຄືນມາໃໝ່." [34]ຝ່າຍພວກສາວົກບໍ່ໄດ້ເຂົ້າ-
ໃຈສິ່ງເຫລົ່ານັ້ນຈັກຂໍ້ ແລະຄຳນັ້ນກໍຖືກຊົງອັດບັງໄວ້ຈາກເຂົາ ແລະເຂົາຈຶ່ງບໍ່ຮູ້ເນື້ອຄວາມທີ່ຊົງ
ກ່າວນັ້ນ.

## ຊົງໂຜດຄົນຕາບອດໃກ້ເມືອງເຢຣິໂກ

*(ມທ 20:29-34; ມຣກ 10:46-52)*

[35]ເມື່ອພຣະອົງສະເດັດມາໃກ້ເມືອງເຢຣິໂກ ມີຄົນຕາບອດຜູ້ໜຶ່ງນັ່ງຂໍທານຢູ່ແຄມທາງ.
[36]ເມື່ອຜູ້ນັ້ນໄດ້ຍິນສຽງປະຊາຊົນຍ່າງກາຍໄປ ກໍຖາມວ່າແມ່ນເລື່ອງອັນໃດ? [37]ເຂົາຈຶ່ງບອກວ່າ
ແມ່ນເຢຊູໄທນາຊາເຣັດຜ່ານກາຍໄປ. [38]ຄົນຕາບອດນັ້ນໄດ້ຮ້ອງຂຶ້ນວ່າ, "ເຢຊູບຸດດາວິດ
ເອີຍ, ຂໍຈົ່ງເມດຕາຂ້ານ້ອຍແດ່ທ້ອນ!". [39]ຄົນທີ່ຍ່າງໄປກ່ອນຈຶ່ງຫ້າມໃຫ້ມິດຢູ່ ແຕ່ຜູ້ນັ້ນຊ້ຳຮ້ອງ
ແຮງຂຶ້ນວ່າ, "ບຸດດາວິດເອີຍ, ຂໍຈົ່ງເມດຕາຂ້ານ້ອຍແດ່ທ້ອນ!". [40]ພຣະເຢຊູຊົງຢຸດຢູ່ສັ່ງເຂົາ

ໃຫ້ພາຄົນຕາບອດມາຫາພຣະອົງ ແລະເມື່ອເຂົ້າມາໃກ້ແລ້ວ ພຣະອົງຊົງຖາມຜູ້ນັ້ນວ່າ. [41]“ເຈົ້າ
ຢາກໃຫ້ເຮົາເຮັດຫຍັງໃຫ້ເຈົ້າ?” ຜູ້ນັ້ນທູນຕອບວ່າ, “ທ່ານເອີຍ, ຂໍໂຜດໃຫ້ຂ້ານ້ອຍເຫັນຮຸ່ງແດ່-
ທ້ອນ!”. [42]ພຣະເຢຊູຊົງກ່າວແກ່ຄົນຕາບອດນັ້ນວ່າ, “ຈົ່ງເຫັນຮຸ່ງສາຄວາມເຊື່ອຂອງເຈົ້າໄດ້
ຊ່ອຍໃຫ້ເຈົ້າດີປົກກະຕິແລ້ວ.” [43]ໃນທັນໃດນັ້ນຜູ້ນັ້ນກໍໄດ້ເຫັນຮຸ່ງ ຈຶ່ງໄດ້ຕິດຕາມພຣະອົງໄປ
ແລະຖວາຍສາທຸການແດ່ພຣະເຈົ້າ ເມື່ອຄົນທັງປວງໄດ້ເຫັນຢ່າງນັ້ນກໍພາກັນສັນລະເສີນພຣະ-
ເຈົ້າ.

# ບົດທີ 19

## ພຣະເຢຊູກັບຊັກຂາຍ

[1]ຝ່າຍພຣະເຢຊູສະເດັດເຂົ້າໄປໃນເມືອງເຢຣິໂກ ແລະຊົງຜ່ານເມືອງນັ້ນໄປ. [2]ແລະເບິ່ງແມ!
ມີຊາຍຄົນໜຶ່ງຊື່ຊັກຂາຍ ເປັນນາຍດ່ານພາສີແລະເປັນຄົນຮັ່ງມີ. [3]ຊັກຂາຍພະຍາຍາມຈະໄດ້
ເຫັນພຣະເຢຊູວ່າເປັນຄົນແນວໃດ ແຕ່ເຫັນບໍ່ໄດ້ເພາະຄົນໜາແໜ້ນດ້ວຍວ່າຕົນເປັນຄົນເຕ້ຍ.
[4]ຊັກຂາຍຈຶ່ງແລ່ນລັດໜ້າໄປຂຶ້ນຕົ້ນຊູກະໂມເພື່ອຈະໄດ້ເຫັນພຣະອົງ ເພາະພຣະອົງກຳລັງສະ-
ເດັດໄປທາງນັ້ນ. [5]ເມື່ອພຣະເຢຊູສະເດັດມາເຖິງບ່ອນນັ້ນ ພຣະອົງຊົງແຫງນພຣະພັກເບິ່ງຊັກ-
ຂາຍ ຈຶ່ງຊົງກ່າວວ່າ, “ຊັກຂາຍເອີຍ, ຈົ່ງຮີບລົງມາ ເພາະວ່າວັນນີ້ເຮົາຈະຕ້ອງພັກຢູ່ໃນເຮືອນ
ຂອງທ່ານ.” [6]ຊັກຂາຍກໍຮີບລົງມາແລະຕ້ອນຮັບພຣະອົງດ້ວຍຄວາມຍິນດີ. [7]ເມື່ອຄົນທັງປວງ
ໄດ້ເຫັນດັ່ງນັ້ນກໍພາກັນຈົ່ມວ່າ, “ເປັນຫຍັງໜໍ, ທ່ານຜູ້ນີ້ຈຶ່ງເຂົ້າໄປພັກຢູ່ກັບຄົນນອກສິນທຳ?”.
[8]ສ່ວນຊັກຂາຍກໍຢືນຂຶ້ນທູນພຣະອົງວ່າ, “ເບິ່ງແມ! ນາຍເອີຍ, ເຂົ້າຂອງຂອງຂ້ານ້ອຍ ຂ້າ-
ນ້ອຍຍອມໃຫ້ແກ່ຄົນຍາກຈົນເຄິ່ງໜຶ່ງ ແລະຖ້າຂ້ານ້ອຍໄດ້ສໍ້ໂກງເອົາຂອງຂອງຜູ້ໃດ ຂ້ານ້ອຍກໍ
ຍອມສົ່ງຄືນໃຫ້ສີ່ທໍ່.” [9]ພຣະເຢຊູຊົງກ່າວວ່າ, “ວັນນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ ເພາະ
ຄົນນີ້ເປັນລູກຫລານຂອງອັບຣາຮາມເໝືອນກັນ. [10]ດ້ວຍວ່າບຸດມະນຸດໄດ້ມາເພື່ອຈະຊອກຫາ
ແລະໂຜດເອົາຄົນທີ່ຫລົງເສຍໄປແລ້ວນັ້ນໃຫ້ລອດພົ້ນ.”

## ຄຳອຸປະມາເລື່ອງເງິນມະນາ

*(ມທ 25:14-30)*

[11]ເມື່ອຄົນທັງປວງໄດ້ຍິນດັ່ງນັ້ນ ພຣະອົງຊົງກ່າວຄຳອຸປະມາໃຫ້ເຂົາຟັງຕື່ມອີກຂໍ້ໜຶ່ງ ເພາະ
ພຣະອົງສະເດັດມາໃກ້ກຸງເຢຣູຊາເລັມແລ້ວ ແລະເພາະເຂົາຄຶດວ່າລາຊະອານາຈັກຂອງພຣະ-
ເຈົ້າຈະປະກົດໃນໄວໆ ນັ້ນ. [12]ເຫດສັນນັ້ນພຣະອົງຊົງກ່າວວ່າ, “ມີເຈົ້ານາຍຜູ້ໜຶ່ງອອກໄປປະ-
ເທດໄກ ເພື່ອໄປຮັບເອົາລາຊະແຜ່ນດິນອັນໜຶ່ງສຳລັບຕົນແລ້ວຈຶ່ງກັບຄືນມາ. [13]ກ່ອນອອກໄປ
ທ່ານໄດ້ເອີ້ນຂ້ອຍໃຊ້ຂອງຕົນສິບຄົນມາຫາແລ້ວມອບເງິນສິບມະນາໃຫ້ເຂົາແລະສັ່ງວ່າ ‘ຈົ່ງເອົາ
ເງິນນີ້ໄປເປັນທຶນຄ້າຂາຍຈົນກວ່າເຮົາຈະກັບມາ’. [14]ແຕ່ພົນລະເມືອງຊັງທ່ານຜູ້ນັ້ນຈຶ່ງໃຊ້ຄະນະ
ທູດຕາມໄປທູນວ່າ ‘ເຮົາບໍ່ຢາກໃຫ້ທ່ານຜູ້ນີ້ປົກຄອງພວກເຮົາ’. [15]ເມື່ອທ່ານໄດ້ຮັບອຳນາດຄອງ
ແຜ່ນດິນກັບມາແລ້ວ ທ່ານຈຶ່ງເອີ້ນພວກຂ້ອຍໃຊ້ທີ່ທ່ານໄດ້ໃຫ້ເງິນໄວ້ນັ້ນມາ ເພື່ອຈະໄດ້ຮູ້ວ່າ
ເຂົາທຸກຄົນຄ້າໄດ້ກຳໄລຫລາຍນ້ອຍເທົ່າໃດ? [16]ຜູ້ທີໜຶ່ງເຂົ້າມາທູນວ່າ ‘ນາຍເອີຍ, ເງິນມະນາ

ໜຶ່ງຂອງທ່ານໄດ້ກຳໄລສິບມະນາ'. 17ທ່ານຈຶ່ງກ່າວກັບຜູ້ນັ້ນວ່າ 'ດີແລ້ວ, ເຈົ້າເປັນຂ້ອຍໃຊ້ທີ່ດີ
ເພາະເຈົ້າສັດຊື່ໃນຂອງເລັກນ້ອຍ ເຈົ້າຈົ່ງມີອຳນາດປົກຄອງໄດ້ສິບຫົວເມືອງ'. 18ຜູ້ທີສອງມາ
ທູນວ່າ, 'ນາຍເອີຍ, ເງິນມະນາໜຶ່ງຂອງທ່ານໄດ້ກຳໄລຫ້າມະນາ'. 19ທ່ານໄດ້ເວົ້າກັບຜູ້ນັ້ນ
ເໝືອນກັນວ່າ, 'ເຈົ້າຈົ່ງປົກຄອງໄດ້ຫ້າຫົວເມືອງ'. 20ອີກຄົນໜຶ່ງມາທູນວ່າ 'ນາຍເອີຍ, ນີ້
ແຫລະ, ເງິນມະນາໜຶ່ງຂອງທ່ານ ຂ້ານ້ອຍໄດ້ເອົາຜ້າຫໍ່ມ້ຽນໄວ້. 21ເພາະຂ້ານ້ອຍຢ້ານທ່ານ
ດ້ວຍວ່າທ່ານເປັນຄົນເຄັ່ງຄັດ ທ່ານເຄີຍເກັບເອົາອັນທີ່ທ່ານບໍ່ວາງລົງແລະເຄີຍກ່ຽວອັນທີ່ທ່ານບໍ່
ໄດ້ຫວ່ານ'. 22ທ່ານຈຶ່ງຕອບຜູ້ນັ້ນວ່າ 'ອ້າຍຂ້ອຍໃຊ້ຜູ້ຊົ່ວເອີຍ, ເຮົາຈະລົງໂທດດ້ວຍຄຳປາກ
ຂອງໂຕເອງ ໂຕຮູ້ຫລືວ່າ ເຮົາເປັນຜູ້ເຄັ່ງຄັດ, ເຄີຍເກັບເອົາອັນທີ່ເຮົາບໍ່ໄດ້ວາງລົງ, ແລະກ່ຽວ
ອັນທີ່ເຮົາບໍ່ໄດ້ຫວ່ານ. 23ແຕ່ເປັນເພາະດ້ວຍເຫດໃດໂຕຈຶ່ງບໍ່ຝາກເງິນຂອງເຮົາໄວ້ທີ່ທະນາຄານ
ແລະເມື່ອເຮົາກັບມາແລ້ວຈະໄດ້ຖອນເງິນຂອງເຮົາຄືນພ້ອມກັບດອກເບ້ຍ'. 24ແລ້ວທ່ານໄດ້ສັ່ງ
ຄົນທີ່ຢືນຢູ່ຫັ້ນວ່າ 'ຈົ່ງຍຶກເງິນມະນາໜຶ່ງນັ້ນໄປຈາກມັນເສຍ ເອົາໃຫ້ແກ່ຜູ້ທີ່ມີສິບມະນາ'.
25[ຄົນເຫລົ່ານັ້ນຕອບວ່າ 'ນາຍເອີຍ, ຜູ້ນັ້ນມີສິບມະນາແລ້ວ']. 26ເຮົາບອກເຈົ້າທັງຫລາຍວ່າ
ທຸກຄົນທີ່ມີຢູ່ແລ້ວຈະຊົງເພີ່ມເຕີມໃຫ້ຜູ້ນັ້ນອີກ ແຕ່ຜູ້ທີ່ບໍ່ມີເຖິງແມ່ນວ່າສິ່ງທີ່ຕົນມີຢູ່ນັ້ນ ຈະຊົງ
ຍຶກໄປຈາກຕົນເສຍ. 27ຝ່າຍພວກສັດຕູຂອງເຮົາທີ່ບໍ່ຢາກໃຫ້ເຮົາປົກຄອງເຂົານັ້ນ ຈົ່ງພາເຂົາມາ
ທີ່ນີ້ແລະຂ້າເຂົາເສຍຕໍ່ໜ້າເຮົາ."

## ສະເດັດເຂົ້າກຸງຢ່າງຜູ້ມີໄຊ

*(ມທ 21:1-11; ມຣກ 11:1-11; ຢຣ 12:12-19)*

28ເມື່ອຊົງກ່າວຄຳເຫລົ່ານີ້ແລ້ວ ພຣະອົງໄດ້ສະເດັດໄປກ່ອນໜ້າເຂົາ ຂຶ້ນເມືອກຸງເຢຣູຊາ-
ເລັມ. 29ເມື່ອພຣະອົງສະເດັດມາໃກ້ບ້ານເບັດຟາເຄ ແລະບ້ານເບັດທານີ ເຖິງພູທີ່ເອີ້ນວ່າພູ
ໝາກກອກເທດ ພຣະອົງໄດ້ຊົງໃຊ້ສາວົກສອງຄົນໄປ. 30ໂດຍຊົງສັ່ງວ່າ, "ຈົ່ງເຂົ້າໄປໃນບ້ານ
ທີ່ຢູ່ຕໍ່ໜ້າ ເມື່ອເຂົ້າໄປເຖິງແລ້ວ ຈະພົບລໍນ້ອຍໂຕໜຶ່ງຜູກຢູ່ ທີ່ຍັງບໍ່ມີໃຜຂຶ້ນຂີ່ຈັກເທື່ອ ຈົ່ງແກ້
ມັນຈູງມາທີ່ນີ້. 31ຖ້າມີໃຜຖາມວ່າ 'ແກ້ມັນເຮັດຫຍັງ?' ຈົ່ງຕອບຢ່າງນີ້ວ່າ 'ນາຍຕ້ອງການ.'"[ກ]
32ສາວົກທີ່ຖືກຮັບໃຊ້ໄປນັ້ນ ໄດ້ພົບເໝືອນກັບພຣະອົງໄດ້ຊົງກ່າວແກ່ເຂົາແລ້ວ. 33ເມື່ອເຂົາກຳ-
ລັງແກ້ລໍນ້ອຍນັ້ນ ພວກເຈົ້າຂອງໄດ້ຖາມວ່າ, "ເປັນຫຍັງຈຶ່ງແກ້ລໍນັ້ນ?". 34ເຂົາຕອບວ່າ, "ນາຍ
ຕ້ອງການ." 35ແລ້ວເຂົາໄດ້ຈູງລໍນັ້ນມາເຖິງພຣະເຢຊູ ແລະເອົາເສື້ອຜ້າຂອງເຂົາປູຫລັງມັນ ຈຶ່ງ
ອັນເຊີນພຣະອົງຂຶ້ນປະທັບ. 36ເມື່ອພຣະອົງກຳລັງສະເດັດໄປ ເຂົາໄດ້ເອົາເສື້ອຜ້າປູລົງຕາມ
ທາງ. 37ເມື່ອພຣະອົງກຳລັງສະເດັດມາໃກ້ບ່ອນຈະລົງຈາກພູໝາກກອກເທດ ພວກລູກສິດທັງ
ໝົດກໍຕັ້ງຕົ້ນຊົມຊື່ນຍິນດີສັນລະເສີນພຣະເຈົ້າດ້ວຍສຽງດັງ ເພາະການອິດທິລິດທັງປວງທີ່ເຂົາ
ໄດ້ເຫັນນັ້ນ. 38ໂດຍເວົ້າວ່າ, "ຂໍໃຫ້ພຣະມະຫາກະສັດຜູ້ທີ່ສະເດັດມາ ໃນພຣະນາມຂອງອົງ
ພຣະຜູ້ເປັນເຈົ້າ ຈົ່ງຊົງພຣະຈະເລີນ ຈົ່ງມີສັນຕິສຸກໃນສະຫວັນ ແລະມີພຣະລັດສະໝີໃນທີ່ສູງ
ສຸດ." 39ຝ່າຍຟາຣີຊາຍໃນໝູ່ປະຊາຊົນນັ້ນໄດ້ທູນພຣະອົງວ່າ, "ອາຈານເອີຍ, ຈົ່ງຫ້າມພວກ
ສາວົກຂອງທ່ານແດ່!" 40ພຣະອົງຊົງຕອບເຂົາວ່າ, "ເຮົາບອກທ່ານທັງຫລາຍວ່າ ຖ້າຄົນເຫລົ່ານີ້

[ກ]ຫລືວ່າ "ເຈົ້າຂອງມັນຕ້ອງການ."

ມິດເສຍ ກ້ອນຫີນທັງຫລາຍກໍຈະຮ້ອງຂຶ້ນ."
41ເມື່ອພຣະອົງສະເດັດມາໃກ້ແລະເຫັນກຸງແລ້ວ ກໍຊົງພຣະກັນແສງເພາະສົງສານກຸງນັ້ນ.
42ໂດຍຊົງກ່າວວ່າ, "ໂອ ເຢຣູຊາເລັມ, ໃນວັນນີ້ ຖ້າເຈົ້າເອງໄດ້ຮູ້ເຖິງການທີ່ກ່ຽວຂ້ອງກັບສັນຕິ
ສຸກ ແຕ່ວ່າບັດນີ້ສິ່ງເຫລົ່ານັ້ນໄດ້ບັງລັບໄວ້ຈາກຕາເຈົ້າແລ້ວ. 43ດ້ວຍວ່າເວລາຈະມາເຖິງເຈົ້າ
ເມື່ອສັດຕູຂອງເຈົ້າຈະຂຸດຄູອ້ອມເຈົ້າແລະຈະຕັ້ງເຈົ້າໄວ້ທຸກດ້ານ. 44ແລ້ວເຂົາຈະທຳລາຍເຈົ້າ
ກັບບັນດາລູກທັງຫລາຍທີ່ຢູ່ນຳເຈົ້າໃຫ້ລົງພຽງດິນ ແລະເຂົາຈະບໍ່ປະໃຫ້ກ້ອນຫີນຊ້ອນທັບກັນໄວ້
ພາຍໃນເຈົ້າ ເພາະເຈົ້າບໍ່ໄດ້ຮູ້ເວລາຂອງການຊົງຢ້ຽມຢາມເຈົ້າ."

## ຊົງຊຳລະບໍລິເວນພຣະວິຫານ

*(ມທ 21:12-17; ມຣກ 11:15-19; ຢຮ 2:13-22)*

45ຝ່າຍພຣະອົງໄດ້ສະເດັດເຂົ້າໄປໃນບໍລິເວນພຣະວິຫານ ແລ້ວຊົງຕັ້ງຕົ້ນຂັບໄລ່ບັນດາຜູ້ຊື້
ຂາຍຢູ່ທີ່ນັ້ນ. 46ໂດຍຊົງບອກເຂົາວ່າ, "ມີຄຳຂຽນໄວ້ໃນພຣະຄຳພີວ່າ 'ວິຫານຂອງເຮົາຈະເປັນ
ສະຖານທີ່ໄຫວ້ວອນ' ແຕ່ຝ່າຍພວກເຈົ້າມາເຮັດໃຫ້ເປັນ 'ຖໍ້າຂອງໂຈນ'."
47ແລະພຣະອົງຊົງສັ່ງສອນຢູ່ໃນບໍລິເວນພຣະວິຫານທຸກວັນໆ ແຕ່ພວກປະໂລຫິດຕົ້ນໃຫຍ່
ແລະພວກນັກທຳ, ກັບທັງພົນລະເມືອງຜູ້ສຳຄັນໄດ້ພະຍາຍາມຈະຂ້າພຣະອົງເສຍ. 48ແຕ່ເຂົາບໍ່
ໄດ້ພົບຊ່ອງທາງທີ່ຈະເຮັດໄດ້ ເພາະບັນດາພົນລະເມືອງກໍຕິດພັນກັບພຣະອົງແລະເອົາໃຈໃສ່ຟັງ
ຄຳສອນຂອງພຣະອົງ.

# ບົດທີ 20

## ບັນຫາເລື່ອງສິດອຳນາດຂອງພຣະເຢຊູ

*(ມທ 21:23-27; ມຣກ 11:27-33)*

1ວັນໜຶ່ງ, ເມື່ອພຣະເຢຊູກຳລັງຊົງສັ່ງສອນພົນລະເມືອງແລະປະກາດຂ່າວປະເສີດໃນບໍລິ-
ເວນພຣະວິຫານ ມີພວກປະໂລຫິດຕົ້ນໃຫຍ່, ກັບພວກນັກທຳ, ແລະພວກເຖົ້າແກ່ໄດ້ມາຫາ
ພຣະອົງ. 2ທູນວ່າ, "ຈົ່ງບອກພວກເຮົາວ່າ ເຈົ້າມີສິດອັນໃດຈຶ່ງໄດ້ເຮັດການເຫລົ່ານີ້ ແມ່ນໃຜໃຫ້
ສິດນີ້ແກ່ເຈົ້າ." 3ພຣະອົງຊົງຕອບເຂົາວ່າ, "ຝ່າຍເຮົາຈະຖາມທ່ານທັງຫລາຍຈັກຂໍ້ໜຶ່ງເໝືອນກັນ
ຈົ່ງບອກເຮົາເທາະວ່າ. 4ບັບຕິສະມາຂອງໂຢຮັນນັ້ນມາຈາກສະຫວັນຫລືມາຈາກມະນຸດ." 5ເຂົາ
ຈຶ່ງປຶກສາກັນວ່າ, "ຖ້າພວກເຮົາຈະຕອບວ່າ 'ມາຈາກສະຫວັນ' ມັນຄົງຈະຖາມເຮົາວ່າ 'ດ້ວຍ
ເຫດໃດພວກທ່ານບໍ່ເຊື່ອໂຢຮັນນັ້ນ?'. 6ແລະຖ້າພວກເຮົາຈະວ່າ 'ມາຈາກມະນຸດ' ຄົນທັງປວງ
ກໍຈະຄວ່າງກ້ອນຫີນໃສ່ພວກເຮົາ ເພາະເຂົາທັງຫລາຍເຊື່ອໝັ້ນວ່າ ໂຢຮັນເປັນຜູ້ປະກາດພຣະ-
ທຳ." 7ເຂົາຈຶ່ງທູນຕອບວ່າ, "ບໍ່ຮູ້ຈັກວ່າມາຈາກໃສ?". 8ພຣະເຢຊູຊົງຕອບເຂົາວ່າ "ຝ່າຍເຮົາ
ຈະບໍ່ບອກພວກທ່ານເໝືອນກັນວ່າ ເຮົາເຮັດການນີ້ດ້ວຍສິດອັນໃດ."

## ຄຳອຸປະມາເລື່ອງສວນອະງຸ່ນແລະຄົນເຊົ່າ

*(ມທ 21:33-46; ມຣກ 12:1-12)*

9ຝ່າຍພຣະອົງຕັ້ງຕົ້ນຊົງກ່າວຄຳອຸປະມາໃຫ້ພົນລະເມືອງຟັງວ່າ, "ມີຊາຍຄົນໜຶ່ງໄດ້ເຮັດສວນ

ອະງຸ່ນແລະໃຫ້ຊາວສວນເຊົ່າແລ້ວກໍອອກໄປຕ່າງປະເທດເປັນເວລາຊ້ານານ. 10ເມື່ອເຖິງເວລາ
ກຳນົດແລ້ວທ່ານຈຶ່ງໃຊ້ຂ້ອຍຜູ້ໜຶ່ງມາຫາພວກເຊົ່າສວນນັ້ນ ເພື່ອເຂົາຈະໄດ້ເອົາຜົນອະງຸ່ນສ່ວນ
ໜຶ່ງໃຫ້ແກ່ຂ້ອຍໃຊ້ນັ້ນ ແຕ່ຝ່າຍພວກເຊົ່າສວນນັ້ນ ໄດ້ຂ້ຽນຕີຂ້ອຍໃຊ້ຄົນນັ້ນແລະໄລ່ໃຫ້ກັບໄປ
ມືເປົ່າ. 11ແລ້ວເຈົ້າຂອງສວນຈຶ່ງໃຫ້ຂ້ອຍໃຊ້ຜູ້ໜຶ່ງໄປອີກ ແຕ່ພວກເຊົ່າສວນໄດ້ຂ້ຽນຕີຂ້ອຍໃຊ້ຜູ້
ນັ້ນ ແລະເຮັດໃຫ້ມັນຖືກການອັບອາຍຂາຍໜ້າ ແລ້ວໄລ່ໃຫ້ມັນໄປມືເປົ່າ. 12ແລ້ວເຈົ້າຂອງສວນ
ໄດ້ໃຊ້ຄົນທີສາມໄປ ແລະພວກເຊົ່າສວນກໍໄດ້ທຸບຕີຈົນບາດເຈັບ ແລ້ວໂຍນຖິ້ມນອກສວນ.
13ຝ່າຍເຈົ້າຂອງສວນອະງຸ່ນຈຶ່ງເວົ້າວ່າ 'ເຮົາຈະເຮັດແນວໃດໜໍ ເຮົາຈະໃຊ້ລູກທີ່ຮັກຂອງເຮົາໄປ
ເມື່ອພວກເຊົ່າສວນເຫັນ ບາງທີ່ເຂົາຈະນັບຖື'. 14ແຕ່ເມື່ອພວກເຊົ່າສວນເຫັນລູກນັ້ນເຂົາກໍປຶກສາ
ກັນວ່າ 'ຜູ້ນີ້ແຫລະ, ເປັນເຈົ້າຂອງມໍລະດົກ ຈົ່ງຂ້າມັນເສຍ ເພື່ອມໍລະດົກຈະຕົກມາເປັນຂອງ
ເຮົາ'. 15ເຂົາຈຶ່ງພາກັນຖິ້ມລູກນັ້ນອອກນອກສວນແລະຂ້າເສຍ ເຫດສັນນັ້ນເຈົ້າຂອງສວນຈະ
ເຮັດຢ່າງໃດກັບຄົນເຫລົ່ານັ້ນ. 16ທ່ານຈະມາຂ້າຄົນເຊົ່າສວນເຫລົ່ານັ້ນເສຍ ແລະຈະເອົາສວນ
ອະງຸ່ນນັ້ນໃຫ້ຜູ້ອື່ນເຊົ່າ" ເມື່ອເຂົາທັງຫລາຍໄດ້ຍິນດັ່ງນັ້ນແລ້ວກໍເວົ້າວ່າ, "ຢ່າໃຫ້ເກີດເປັນຢ່າງ
ນັ້ນເທາະ!". 17ຝ່າຍພຣະອົງຊົງເພ່ງເບິ່ງເຂົາແລ້ວຊົງກ່າວວ່າ, "ເຫດສັນນັ້ນຄຳທີ່ຂຽນໄວ້ໃນ
ພຣະຄຳພີຈະໝາຍຄວາມວ່າຢ່າງໃດ ຊຶ່ງວ່າ, 'ຫີນທີ່ນາຍຊ່າງໄດ້ຖອດຖິ້ມເສຍຫີນນັ້ນແຫລະ,
ໄດ້ກາຍເປັນຫີນເສົາເອກແລ້ວ'. 18ຜູ້ໃດລົ້ມທັບຫີນນີ້ ຜູ້ນັ້ນຈະຕ້ອງແຕກຫັກໄປ ແຕ່ຫີນນັ້ນຈະ
ຕົກທັບຜູ້ໃດ ຜູ້ນັ້ນຈະແຫລກມຸ່ນໄປ."

## ບັນຫາເລື່ອງເສຍສ່ວຍ

*(ມທ 22:15-22; ມຣກ 12:13-17)*

19ຝ່າຍພວກນັກທຳແລະພວກປະໂລຫິດຕົນໃຫຍ່ຮູ້ຢູ່ວ່າ ພຣະອົງຊົງກ່າວຄຳອຸປະມານັ້ນຕໍ່ສູ້
ພວກເຂົາ ເຂົາຈຶ່ງພະຍາຍາມຈະຈັບພຣະອົງໃນເວລານັ້ນ ແຕ່ເຂົາກໍຢ້ານພົນລະເມືອງ.

20ເຂົາຈຶ່ງຕິດຕາມເບິ່ງພຣະອົງ ແລະໃຊ້ຄົນສອດແນມໃຫ້ປອມຕົວເໝືອນເປັນຄົນສັດຊື່ ເພື່ອ
ຫວັງຈະຈັບຜິດໃນຖ້ອຍຄຳຂອງພຣະອົງ ເພື່ອຈະມອບພຣະອົງໄວ້ໃນອຳນາດແລະອາດຍາສິດ
ຂອງຜູ້ປົກຄອງ. 21ຄົນພວກນັ້ນຈຶ່ງທູນພຣະອົງວ່າ, "ອາຈານເອີຍ, ພວກຂ້າພະເຈົ້າຮູ້ຢູ່ວ່າ
ທ່ານກ່າວແລະສັ່ງສອນລ້ວນແຕ່ຄວາມຈິງ ແລະບໍ່ເລືອກໜ້າຜູ້ໃດ ແຕ່ໄດ້ສັ່ງສອນໃນທາງຂອງ
**ພຣະເຈົ້າ**ຢ່າງສັດຊື່. 22ການທີ່ພວກຂ້າພະເຈົ້າຈະເສຍສ່ວຍໃຫ້ແກ່**ກາຍຊາ**ນັ້ນສົມຄວນ[ກ] ຫລື
ບໍ່." 23ຝ່າຍພຣະອົງຈຶ່ງຊອດຮູ້ກົນອຸບາຍຂອງເຂົາຈຶ່ງຊົງກ່າວວ່າ. 24"ຈົ່ງເອົາເງິນຫລຽນເດນາຣິ-
ອົນໜຶ່ງມາໃຫ້ເຮົາເບິ່ງ ຮູບແລະຄຳຈາລຶກນີ້ເປັນຂອງໃຜ?" ເຂົາທູນຕອບວ່າ, "ເປັນຂອງ**ກາຍ-
ຊາ**." 25ແລ້ວພຣະອົງຊົງກ່າວກັບເຂົາວ່າ, "ສັນນັ້ນສິ່ງທີ່ເປັນຂອງ**ກາຍຊາ** ຈົ່ງຄືນຖວາຍແກ່
**ກາຍຊາ** ແລະສິ່ງທີ່ເປັນຂອງ**ພຣະເຈົ້າ** ຈົ່ງຄືນຖວາຍແດ່**ພຣະເຈົ້າ**." 26ຄົນເຫລົ່ານັ້ນຈັບຜິດໃນ
ຖ້ອຍຄຳຂອງພຣະອົງຕໍ່ໜ້າພົນລະເມືອງບໍ່ໄດ້ ແລະເຂົາກໍປະຫລາດໃຈໃນຄຳຕອບຂອງພຣະອົງ
ຈຶ່ງພາກັນມິດຢູ່.

---

[ກ]ໝາຍຄວາມວ່າ "ຖືກຕ້ອງພຣະບັນຍັດ."

## ບັນຫາເລື່ອງການຄືນມາຈາກຕາຍ

*(ມທ 22:23-33; ມຣກ 12:18-27)*

27ຍັງມີລາງຄົນໃນພວກຊາດູກາຍມາຫາພຣະອົງ ແມ່ນພວກນີ້ທີ່ຖືວ່າບໍ່ມີການຄືນມາຈາກ
ຕາຍ. 28ເຂົາທູນຖາມພຣະອົງວ່າ, "ອາຈານເອີຍ, ໂມເຊໄດ້ຂຽນສັ່ງພວກເຮົາໄວ້ວ່າ 'ຖ້າອ້າຍ
ຂອງຊາຍຜູ້ໜຶ່ງຕາຍ ປະພັນລະຍາໄວ້ແຕ່ບໍ່ມີລູກ ກໍໃຫ້ຜູ້ນັ້ນຮັບເອົາເອື້ອຍໃພ້ໄວ້ເປັນພັນລະຍາ
ເພື່ອສືບເຊື້ອສາຍອ້າຍຂອງຕົນ?'. 29ອັນໜຶ່ງ, ມີເຈັດຊາຍອ້າຍນ້ອງນຳກັນ ອ້າຍກົກເອົາເມຍ
ແລ້ວຕາຍໄປເມື່ອຍັງບໍ່ມີລູກ. 30ແລະຜູ້ຖ້ອນສອງ. 31ກັບທັງຜູ້ຖ້ອນສາມໄດ້ເອົາຍິງນັ້ນ ທັງເຈັດ
ຄົນກໍເໝືອນກັນໄດ້ຕາຍໄປເມື່ອຍັງບໍ່ມີລູກ. 32ພາຍຫລັງຍິງນັ້ນກໍຕາຍເໝືອນກັນ. 33ສັນນັ້ນໃນ
ວັນຄືນມາຈາກຕາຍ ຍິງນັ້ນຈະເປັນເມຍຂອງຜູ້ໃດ ດ້ວຍວ່ານາງໄດ້ເປັນເມຍຂອງຊາຍທັງເຈັດ
ຄົນແລ້ວ."

34ພຣະເຢຊູຊົງກ່າວກັບເຂົາວ່າ, "ຄົນຝ່າຍໂລກນີ້ເຄີຍແຕ່ງງານແລະຍົກໃຫ້ເປັນຜົວເມຍກັນ.
35ແຕ່ຄົນເຫລົ່ານັ້ນທີ່ຊົງຖືວ່າສົມຄວນຈະເຖິງໂລກໜ້າ ແລະຈະເຖິງການຄືນມາຈາກຕາຍ ບໍ່ມີ-
ການແຕ່ງງານຫລືການຍົກໃຫ້ເປັນຜົວເມຍກັນ. 36ດ້ວຍວ່າເຂົາຈະຕາຍບໍ່ໄດ້ອີກ ເພາະເຂົາສະ-
ເໝີ ເທວະດາແລະເປັນບຸດຂອງພຣະເຈົ້າ ເປັນຄົນສົມກັບການຄືນມາຈາກຕາຍ. 37ແຕ່ທີ່ຄົນ
ຕາຍຈະຖືກຊົງບັນດານໃຫ້ເປັນຄືນມານັ້ນ ໂມເຊກໍຍັງໄດ້ສະແດງໃນເລື່ອງພຸ່ມໄມ້ ຄືໄດ້ເອີ້ນອົງ
ພຣະຜູ້ເປັນເຈົ້າວ່າຊົງເປັນ 'ພຣະເຈົ້າຂອງອັບຣາຮາມ, ພຣະເຈົ້າຂອງອີຊາກ, ແລະພຣະເຈົ້າ
ຂອງຢາໂຄບ'. 38ພຣະອົງບໍ່ໄດ້ຊົງເປັນພຣະເຈົ້າຂອງຄົນຕາຍ ແຕ່ຊົງເປັນພຣະເຈົ້າຂອງຄົນ
ເປັນ ດ້ວຍວ່າຈຳເພາະພຣະເຈົ້າຄົນທຸກຄົນຍັງເປັນຢູ່." 39ນັກທຳລາງຄົນຈຶ່ງທູນພຣະອົງວ່າ,
"ອາຈານເອີຍ, ທ່ານເວົ້າຖືກແລ້ວ," 40ເພາະເຂົາບໍ່ກ້າຖາມອັນໃດກັບພຣະອົງຕໍ່ໄປອີກ.

## ບັນຫາເລື່ອງບຸດຂອງດາວິດ

*(ມທ 22:41-46; ມຣກ 12:34-37)*

41ພຣະອົງຈຶ່ງຊົງຖາມເຂົາວ່າ, "ທີ່ຄົນທັງຫລາຍເວົ້າວ່າ ພຣະຄຣິດຊົງເປັນເຊື້ອສາຍຂອງ
ດາວິດນັ້ນ ເປັນໄດ້ຢ່າງໃດ? 42ດ້ວຍວ່າກະສັດດາວິດເອງໄດ້ຊົງກ່າວໄວ້ໃນພຣະທຳເພງສັນ-
ລະເສີນວ່າ,

'ພຣະຜູ້ເປັນເຈົ້າຊົງກ່າວກັບອົງພຣະຜູ້ເປັນເຈົ້າຂອງຂ້າພຣະອົງວ່າ,
"ຈົ່ງນັ່ງເບື້ອງຂວາມືຂອງເຮົາ
43 ຈົນກວ່າເຮົາຈະປາບສັດຕູຂອງທ່ານ
ໃຫ້ຢູ່ໃຕ້ຕີນຂອງທ່ານ".'

44ເມື່ອກະສັດດາວິດຍັງເອີ້ນພຣະຄຣິດວ່າ 'ພຣະຜູ້ເປັນເຈົ້າ' ແລ້ວພຣະຄຣິດຈະເປັນເຊື້ອສາຍ
ຂອງດາວິດໄດ້ຢ່າງໃດ."

## ຊົງປະນາມພວກນັກທຳ

*(ມທ 23:1-36; ມຣກ 12:38-40. ລກ 11:37-54)*

45ເມື່ອຄົນທັງຫລາຍກຳລັງຟັງຢູ່ນັ້ນ ພຣະອົງຊົງກ່າວແກ່ພວກສາວົກວ່າ. 46"ຈົ່ງລະວັງໃຫ້ດີ

ຈາກພວກນັກທຳ ຜູ້ຊອບນຸ່ງເສື້ອຍາວຍ່າງໄປມາ, ຊອບໃຫ້ຄົນຄຳນັບຕົວໃນທີ່ປະຊຸມຊົນ, ທັງ
ຊອບບ່ອນນັ່ງອັນມີກຽດໃນໂຮງທຳມະເທດສະໜາແລະໃນການລ້ຽງ. [47]ເຂົາກືນກິນຄອບຄົວ
ຂອງແມ່ໝ້າຍ ແລະແກ້ງໄຫວ້ວອນໃຫ້ຍືດຍາວຄົນເຫລົ່ານີ້ຈະຕ້ອງຮັບໂທດຫລາຍຂຶ້ນ."

# ບົດທີ 21

## ເງິນຖວາຍຂອງຍິງໝ້າຍ

*(ມຣກ 12:41-44)*

[1]ເມື່ອພຣະອົງຊົງເງີຍພຣະພັກຂຶ້ນ ກໍຊົງເຫັນພວກຄົນຮັ່ງມີກຳລັງປ່ອນເງິນລົງໃນຕູ້ເກັບເງິນ
ຖວາຍ. [2]ແລະພຣະອົງຊົງເຫັນແມ່ໝ້າຍທຸກຍາກຄົນໜຶ່ງ ເອົາຫລຽນທອງແດງສອງອັດປ່ອນລົງ
ໃນຕູ້ນັ້ນ. [3]ພຣະອົງຈຶ່ງຊົງກ່າວວ່າ, "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ແມ່ໝ້າຍຍາກ-
ຈົນຜູ້ນີ້ໄດ້ໃສ່ຫລາຍກວ່າຄົນທັງປວງນັ້ນ. [4]ເພາະວ່າຝ່າຍຄົນທັງປວງນັ້ນ ໄດ້ເອົາເງິນຈາກການ
ເຫລືອໃຊ້ຂອງເຂົາມາປ່ອນລົງ ແຕ່ຍິງຄົນນີ້ໄດ້ເອົາເງິນສຳລັບລ້ຽງຊີວິດຂອງຕົນ ຈາກຄວາມ
ຂັດສົນທີ່ສຸດມາໃສ່ຈົນໝົດ."

## ພຣະວິຫານຈະຖືກທຳລາຍ

*(ມທ 24:1-2; ມຣກ 13:1-2)*

[5]ມີລາງຄົນກ່າວຊົມເຊີຍພຣະວິຫານວ່າ ໄດ້ຕົກແຕ່ງດ້ວຍຫີນງາມແລະເຄື່ອງຖວາຍ ພຣະອົງ
ຈຶ່ງຊົງກ່າວວ່າ. [6]"ສິ່ງເຫລົ່ານີ້ທີ່ທ່ານທັງຫລາຍເຫັນ ໃນຄາວທີ່ຈະມາຈະຖືກທຳລາຍລົງ ຈົນຫີນ
ທີ່ຊ້ອນທັບກັນຢູ່ນີ້ບໍ່ເຫລືອຈັກກ້ອນດຽວ."

## ໝາຍສຳຄັນແລະການຂົ່ມເຫງ

*(ມທ 24:3-14; ມຣກ 3:3-13)*

[7]ເຂົາຈຶ່ງທູນຖາມພຣະອົງວ່າ, "ອາຈານເອີຍ, ເຫດການເຫລົ່ານີ້ຈະເກີດຂຶ້ນເມື່ອໃດ ສິ່ງໃດ
ຈະເປັນໝາຍສຳຄັນວ່າ ການທັງປວງນີ້ຈວນຈະບັງເກີດຂຶ້ນ." [8]ພຣະອົງຊົງຕອບເຂົາວ່າ, "ຈົ່ງ
ລະວັງໃຫ້ດີ ຢ່າໃຫ້ຜູ້ໃດຫລອກລວງພວກທ່ານໃຫ້ຫລົງ ດ້ວຍວ່າຈະມີຫລາຍຄົນມາອ້າງນາມ
ຂອງເຮົາວ່າ 'ເຮົານີ້ແຫລະ, ເປັນຜູ້ນັ້ນ' ແລະວ່າ 'ເວລາກຳນົດໃກ້ເຂົ້າມາແລ້ວ' ພວກທ່ານຢ່າ
ຕາມເຂົາໄປ. [9]ເມື່ອພວກທ່ານໄດ້ຍິນເລື່ອງການເສິກສົງຄາມແລະການປັ່ນປ່ວນວຸ້ນວາຍ ຢ່າ
ຕົກໃຈ ເພາະວ່າເຫດການເຫລົ່ານີ້ຕ້ອງເກີດຂຶ້ນກ່ອນ ແຕ່ທີ່ສຸດປາຍນັ້ນຈະບໍ່ມາເຖິງທັນທີ."
[10]ແລ້ວພຣະອົງຊົງກ່າວແກ່ເຂົາວ່າ, "ປະເທດຕໍ່ປະເທດ ອານາຈັກຕໍ່ອານາຈັກຈະສູ້ຮົບກັນ.
[11]ທັງຈະເກີດແຜ່ນດິນໄຫວອັນໃຫຍ່ ແລະຈະເກີດການອຶດຢາກກັບພະຍາດຮ້າຍແຮງໃນບ່ອນ
ຕ່າງໆ ຈະເກີດການໜ້າຢ້ານອັນພິລຶກເພິງກົວ ແລະມີໝາຍສຳຄັນຈາກທ້ອງຟ້າ. [12]ແຕ່ກ່ອນ
ເຫດການທັງຫລາຍນີ້ເກີດຂຶ້ນ ເຂົາຈະຈັບພວກທ່ານໄວ້, ຈະຂົ່ມເຫງພວກທ່ານ, ຈະມອບພວກ
ທ່ານໄວ້ໃນໂຮງທຳແລະໃນຄຸກ ແລະຈະພາພວກທ່ານໄປຕໍ່ໜ້າກະສັດແລະຜູ້ປົກຄອງ ເພາະ
ພວກທ່ານເຫັນແກ່ນາມຂອງເຮົາ. [13]ການນັ້ນຈະເກີດແກ່ທ່ານເພື່ອທ່ານຈະເປັນພະຍານ. [14]ເຫດ
ສັນນັ້ນພວກທ່ານຕ້ອງປົງໃຈໄວ້ວ່າ ຈະບໍ່ຄຶດລ່ວງໜ້າໄວ້ກ່ອນວ່າຈະແກ້ຕົວຢ່າງໃດ? [15]ດ້ວຍ

ວ່າຝ່າຍເຮົາຈະປະທານໃຫ້ທ່ານມີຖ້ອຍຄຳແລະສະຕິປັນຍາ ຊຶ່ງສັດຕູທັງຫລາຍຂອງພວກທ່ານ
ຈະຕໍ່ຕ້ານແລະຂັດຄ້ານບໍ່ໄດ້. [16]ເຖິງແມ່ນພໍ່ແມ່ຍາດຕິພີ່ນ້ອງແລະມິດສະຫາຍກໍຈະມອບພວກ
ທ່ານໄວ້ ແລະເຂົາຈະໃຫ້ລາງຄົນໃນພວກທ່ານເຖິງແກ່ຄວາມຕາຍ. [17]ຄົນທັງປວງຈະກຽດຊັງ
ພວກທ່ານເພາະເຫັນແກ່ນາມຂອງເຮົາ. [18]ແມ່ນແຕ່ຜົມຈັກເສັ້ນດຽວຈະບໍ່ເສຍໄປຈາກຫົວຂອງ
ພວກທ່ານ. [19]ທ່ານທັງຫລາຍຈະຮັກສາຊີວິດຈິດໃຈຂອງທ່ານໄວ້ດ້ວຍຄວາມອົດຄວາມພຽນຂອງ
ທ່ານ.

## ຊົງທຳນວາຍວ່າກຸງເຢຣູຊາເລັມຈະຖືກທຳລາຍ

*(ມທ 24:15-21; ມຣກ 13:14-19)*

[20]"ເມື່ອໃດທ່ານເຫັນກອງທັບມາຕັ້ງອ້ອມຮອບກຸງເຢຣູຊາເລັມ ເມື່ອນັ້ນທ່ານຈົ່ງຮູ້ວ່າຄວາມ
ຈິບຫາຍຂອງກຸງນັ້ນເຂົ້າມາໃກ້ແລ້ວ. [21]ເມື່ອນັ້ນໃຫ້ຜູ້ທີ່ຢູ່ແຂວງຢູດາຍປົບໜີໄປຍັງພູ ແລະໃຫ້
ຜູ້ທີ່ຢູ່ໃນກຸງອອກໄປ ຄົນທີ່ຢູ່ບ້ານນອກຢ່າໃຫ້ເຂົ້າມາໃນກຸງ. [22]ເພາະວ່າເວລານັ້ນເປັນວັນລົງ-
ໂທດ ເພື່ອຈະໃຫ້ສິ່ງສາລະພັດທີ່ຂຽນໃນພຣະຄຳພີສຳເລັດ. [23]ໃນວັນເຫລົ່ານັ້ນເປັນໜ້າເວທະ-
ນາເຕັມທີ່ຕໍ່ຜູ້ຍິງທີ່ມີທ້ອງແລະມີລູກອ່ອນກິນນົມຢູ່ ເພາະວ່າຈະມີຄວາມທຸກຮ້ອນອັນໃຫຍ່ຫລວງ
ເທິງແຜ່ນດິນ ແລະຈະຊົງພຣະພິໂລດແກ່ພົນລະເມືອງນີ້. [24]ເຂົາຈະລົ້ມລົງເສຍດ້ວຍຄົມດາບ
ແລະຕ້ອງຖືກກວາດເອົາໄປເປັນຊະເລີຍໃນທົ່ວທຸກປະເທດ ແລະຄົນຕ່າງຊາດຈະຢຽບຢ່ຳກຸງ
ເຢຣູຊາເລັມ ຈົນກວ່າເວລາກຳນົດຂອງຄົນຕ່າງຊາດນັ້ນຈະຄົບຖ້ວນ.

## ການສະເດັດມາຂອງບຸດມະນຸດ

*(ມທ 24:29-31; ມຣກ 13:24-27)*

[25]"ຈະມີໝາຍສຳຄັນໃນດວງອາທິດ, ໃນດວງຈັນ, ແລະໃນດວງດາວທັງປວງແລະຈະມີ
ຄວາມທຸກຮ້ອນເທິງແຜ່ນດິນໂລກຕາມປະເທດຕ່າງໆ ຊຶ່ງມີຄວາມສັບສົນເທເພາະສຽງກ້ອງອັນ
ໃຫຍ່ຫລວງຂອງທະເລແລະຟອງນ້ຳ. [26]ມະນຸດຈະສະຫລົບລືມຄືງໄປເພາະຄວາມຢ້ານ ເພາະ
ການຄອຍຖ້າເບິ່ງເຫດການທັງຫລາຍທີ່ຈະເກີດຂຶ້ນໃນໂລກ ດ້ວຍວ່າ 'ບັນດາສິ່ງທີ່ມີອຳນາດໃນ
ທ້ອງຟ້າຈະສັ່ນຫວັ່ນໄຫວ'. [27]ເມື່ອນັ້ນເຂົາຈະເຫັນບຸດມະນຸດສະເດັດມາໃນເມກ ດ້ວຍລິດທານຸ-
ພາບແລະສະຫງ່າລາສີອັນຍິ່ງໃຫຍ່. [28]ເມື່ອເຫດການເຫລົ່ານີ້ຕັ້ງຕົ້ນບັງເກີດຂຶ້ນນັ້ນ ທ່ານທັງ-
ຫລາຍຈົ່ງຍຶດຕົວແລະເງີຍຫົວຂຶ້ນ ດ້ວຍວ່າການຊົງໄຖ່ທ່ານໃຫ້ພົ້ນກໍໃກ້ຈະເຖິງແລ້ວ."

## ຄຳອຸປະມາເລື່ອງຕົ້ນເດື່ອເທດ

*(ມທ 24:32-34; ມຣກ 13:28-31)*

[29]ພຣະອົງຊົງກ່າວຄຳອຸປະມາແກ່ເຂົາວ່າ, "ຈົ່ງເບິ່ງຕົ້ນເດື່ອເທດແລະຕົ້ນໄມ້ທັງປວງດູ.
[30]ເມື່ອມັນປົ່ງໃບອອກແລ້ວທ່ານທັງຫລາຍກໍເຫັນແລະຮູ້ຢູ່ເອງວ່າລະດູຮ້ອນໃກ້ຈະເຖິງແລ້ວ.
[31]ຢ່າງນັ້ນແຫລະ, ພວກທ່ານກໍເໝືອນກັນ ເມື່ອເຫັນເຫດການເຫລົ່ານັ້ນກຳລັງເກີດຂຶ້ນ ຈົ່ງຮູ້ວ່າ
ລາຊະອານາຈັກຂອງ ພຣະເຈົ້າ ໃກ້ຈະເຖິງແລ້ວ. [32]ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ
ຄົນສະໄໝນີ້ຈະບໍ່ລ່ວງລັບໄປກ່ອນ ຈົນກວ່າເຫດການທັງປວງນີ້ບັງເກີດຂຶ້ນ. [33]ຟ້າແລະດິນຈະ
ລ່ວງພົ້ນໄປ ແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ.

### ຊົງເຕືອນໃຫ້ລະວັງ

[34]"ແຕ່ຈົ່ງລະວັງຕົວໃຫ້ດີ ຢ້ານວ່າໃຈຂອງພວກທ່ານຈະໜັກໄປໃນການດື່ມເຫລົ້າ, ແລະມົວ-
ເມົາ, ແລະວິຕົກກັງວົນເຖິງຊີວິດນີ້ ແລ້ວເວລານັ້ນຈະມາເຖິງພວກທ່ານໃນທັນທີ. [35]ເພາະວ່າ
ວັນນັ້ນຈະຫລອນມາຕົກໃສ່ຄົນທັງປວງທົ່ວໜ້າແຜ່ນດິນໂລກເໝືອນຄວ່າງແຫໃສ່ປາ. [36]ເຫດ
ສັນນັ້ນຈົ່ງເຝົ້າລະວັງແລະໄຫວ້ວອນຢູ່ທຸກເວລາ ເພື່ອທ່ານຈະມີກຳລັງພົ້ນຈາກເຫດການທີ່ຈະ
ບັງເກີດມານັ້ນ ແລະຈະຢືນຢູ່ຕໍ່ໜ້າບຸດມະນຸດໄດ້."

[37]ກາງເວັນພຣະອົງຊົງສັ່ງສອນໃນບໍລິເວນພຣະວິຫານທຸກວັນ ແລະກາງຄືນກໍສະເດັດອອກ
ໄປປະທັບຢູ່ທີ່ພູ ຊຶ່ງເຂົາເອີ້ນວ່າພູໝາກກອກເທດ. [38]ເມື່ອຮຸ່ງເຊົ້າຄົນທັງປວງໄດ້ມາຫາພຣະອົງ
ໃນບໍລິເວນພຣະວິຫານເພື່ອຈະຟັງພຣະອົງ.

# ບົດທີ 22

### ການປອງຮ້າຍພຣະເຢຊູ

*(ມທ 26:1-5, 14-16; ມຣກ 14:1-2, 10-11; ຢຮ 11:14-53)*

[1]ເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງທີ່ເອີ້ນວ່າປັດສະຄານັ້ນກໍມາໃກ້ແລ້ວ. [2]ພວກປະໂລຫິດ
ຕົນໃຫຍ່ກັບພວກນັກທຳ ຈະຂ້າພຣະອົງກໍຊອກຊ່ອງທາງ ເພາະເຂົາຢ້ານພົນລະເມືອງ.

[3]ອັນໜຶ່ງ, ຊາຕານໄດ້ເຂົ້າສູນໃຈຢູດາຜູ້ມີຊື່ວ່າອິສະກາຣິອົດ ຜູ້ຊຶ່ງເປັນຄົນໜຶ່ງໃນພວກສິບ
ສອງຄົນນັ້ນ. [4]ຢູດາໄດ້ອອກໄປປຶກສາກັບພວກປະໂລຫິດຕົນໃຫຍ່ແລະພວກນາຍທະຫານຮັກ-
ສາພຣະວິຫານ ວ່າຈະມອບພຣະອົງໃຫ້ພວກເຂົາດ້ວຍວິທີໃດ. [5]ຄົນເຫລົ່ານັ້ນດີໃຈແລະຕົກລົງ
ກັບຢູດາວ່າຈະເອົາເງິນໃຫ້. [6]ສ່ວນຢູດາກໍຍອມຮັບຈຶ່ງຊອກຫາໂອກາດທີ່ຈະມອບພຣະອົງໃຫ້
ເຂົາເມື່ອຫວ່າງຄົນ.

### ພຣະເຢຊູສະເຫວີຍປັດສະຄາກັບສາວົກ

*(ມທ 26:17-25; ມຣກ 14:12-21; ຢຮ 13:21-30)*

[7]ພໍເຖິງວັນທີ່ເຂົາກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ເປັນວັນທີ່ເຂົາຕ້ອງຂ້າລູກແກະສຳລັບປັດສະຄາ.
[8]ພຣະເຢຊູຈຶ່ງຊົງໃຊ້ເປໂຕແລະໂຢຮັນ ໂດຍຊົງສັ່ງເຂົາວ່າ, "ຈົ່ງໄປຈັດແຈງປັດສະຄາໄວ້ເພື່ອ
ເຮົາທັງຫລາຍຈະໄດ້ກິນ." [9]ເຂົາທູນຖາມພຣະອົງວ່າ, "ຈະໃຫ້ພວກຂ້ານ້ອຍໄປຈັດແຈງບ່ອນ
ໃດ?". [10]ພຣະອົງຊົງຕອບເຂົາວ່າ, "ດັ່ງນີ້, ເມື່ອທ່ານທັງສອງຈະເຂົ້າໄປໃນກຸງ ກໍຈະມີຊາຍຄົນ
ໜຶ່ງທູນໝໍ້ນ້ຳມາພົບ ຈົ່ງຕາມເຂົາໃນເຮືອນທີ່ຜູ້ນັ້ນຈະເຂົ້າໄປ. [11]ຈົ່ງເວົ້າກັບເຈົ້າເຮືອນນັ້ນວ່າ
'ອາຈານໃຫ້ຖາມທ່ານວ່າ, ຫ້ອງຮັບແຂກທີ່ເຮົາຈະກິນປັດສະຄາກັບພວກສາວົກຂອງເຮົາໄດ້ນັ້ນ
ຢູ່ທີ່ໃດ?' [12]ເຈົ້າຂອງເຮືອນຈະຊີ້ໃຫ້ທ່ານເຫັນຫ້ອງໃຫຍ່ຊັ້ນເທິງທີ່ຕົກແຕ່ງໄວ້ແລ້ວ ທີ່ນັ້ນ
ແຫລະ, ຈົ່ງຈັດແຈງໄວ້." [13]ເຂົາທັງສອງຈຶ່ງໄປແລະພົບເໝືອນຢ່າງພຣະອົງຊົງກ່າວແກ່ເຂົາ
ແລ້ວເຂົາໄດ້ຈັດແຈງປັດສະຄາໄວ້.

## ຊົງຕັ້ງພິທີມະຫາສະໜິດ

*(ມທ 26:26-30; ມຣກ 14:22-26; 1ກຣທ 11:23-25)*

[14]ເມື່ອເຖິງໂມງມາແລ້ວພຣະອົງປະທັບຮ່ວມໂຕະກັບພວກອັກຄະສາວົກ. [15]ພຣະອົງຊົງກ່າວ
ກັບເຂົາວ່າ, "ເຮົາມີຄວາມປາດຖະໜາດ້ວຍເຕັມໃຈທີ່ຈະກິນປັດສະຄານີ້ກັບພວກທ່ານ ກ່ອນ
ເຮົາຈະທົນທຸກທໍລະມານ. [16]ດ້ວຍເຮົາບອກທ່ານທັງຫລາຍວ່າ ເຮົາຈະບໍ່ກິນປັດສະຄານີ້ອີກຈັກ
ເທື່ອ ຈົນກວ່າຈະສໍາເລັດຄວາມໝາຍຂອງປັດສະຄານັ້ນໃນລາຊະແຜ່ນດິນຂອງພຣະເຈົ້າ."
[17]ພຣະອົງຈັບເອົາຈອກໂມທະນາພຣະຄຸນແລ້ວຊົງກ່າວວ່າ, "ຈົ່ງຮັບເອົາຈອກນີ້ຢາຍໃຫ້ກັນດື່ມ.
[18]ເພາະເຮົາບອກທ່ານທັງຫລາຍວ່າເຮົາຈະບໍ່ດື່ມນໍ້າຜົນອະງຸ່ນນີ້ຕໍ່ໄປອີກ ຈົນກວ່າລາຊະອານາ-
ຈັກຂອງພຣະເຈົ້າຈະມາຕັ້ງຢູ່." [19]ພຣະອົງຊົງຈັບເຂົ້າຈີ່ມາໂມທະນາພຣະຄຸນແລ້ວຊົງຫັກເຂົ້າຈີ່
ນັ້ນຍື່ນໃຫ້ແກ່ເຂົາ ໂດຍຊົງກ່າວວ່າ, "ນີ້ແຫລະ, ຄືກາຍຂອງເຮົາ ຊຶ່ງໄດ້ປະທານສໍາລັບທ່ານ
ທັງຫລາຍ [ຈົ່ງເຮັດຢ່າງນີ້ໃຫ້ເປັນທີ່ລະນຶກເຖິງເຮົາ." [20]ເມື່ອຮັບປະທານເຂົ້າແລງແລ້ວ ຈິ່ງຊົງ
ຈັບເອົາຈອກມາຢ່າງດຽວກັນ ໂດຍຊົງກ່າວວ່າ, "ຈອກນີ້ເປັນຄໍາສັນຍາໃໝ່ໃນເລືອດຂອງເຮົາ
ທີ່ຖອກອອກສໍາລັບທ່ານທັງຫລາຍ].

[21]ແຕ່ເບິ່ງແມ! ມືຂອງຜູ້ທີ່ທໍລະຍົດຕໍ່ເຮົາກໍຢູ່ກັບເຮົາເທິງໂຕະນີ້. [22]ເພາະບຸດມະນຸດຈະສະ-
ເດັດໄປເໝືອນໄດ້ຊົງກໍານົດໄວ້ແລ້ວ ແຕ່ວິບັດແກ່ຜູ້ນັ້ນທີ່ທໍລະຍົດຕໍ່ບຸດມະນຸດ." [23]ພວກສາວົກ
ຕັ້ງຕົ້ນຖາມກັນວ່າ ແມ່ນໃຜໃນໝູ່ເຂົາທີ່ຈະເຮັດການນັ້ນ?

## ເລື່ອງການຊົງກັນເປັນຜູ້ໃຫຍ່

[24]ແລະເກີດມີການຖຽງກັນຂຶ້ນໃນລະຫວ່າງເຂົາວ່າ ຈະຖືວ່າໃຜເປັນຜູ້ໃຫຍ່ກວ່າໝູ່. [25]ພຣະ-
ອົງຈິ່ງຊົງກ່າວແກ່ເຂົາວ່າ, "ກະສັດຂອງຄົນຕ່າງຊາດຍ່ອມເປັນເຈົ້າເໜືອເຂົາແລະຜູ້ທີ່ມີອໍານາດ
ເໜືອເຂົານັ້ນ ເຂົາເອີ້ນວ່າເຈົ້າບຸນເຈົ້າຄຸນ. [26]ແຕ່ໃນພວກທ່ານບໍ່ເປັນຢ່າງນັ້ນ ແຕ່ຜູ້ໃດໃນພວກ
ທ່ານເປັນອ້າຍໃຫ້ເປັນເໝືອນນ້ອງ ແລະຜູ້ໃດເປັນນາຍໃຫ້ຜູ້ນັ້ນເປັນເໝືອນຄົນຮັບໃຊ້. [27]ດ້ວຍ
ວ່າໃຜເປັນໃຫຍ່ ແມ່ນຜູ້ທີ່ນັ່ງຢູ່ໂຕະຫລືຜູ້ທີ່ຮັບໃຊ້ ບໍ່ແມ່ນຜູ້ນັ່ງຢູ່ໂຕະຫລື ແຕ່ຝ່າຍເຮົາ, ເຮົາຢູ່
ຖ້າມກາງພວກທ່ານເປັນເໝືອນຜູ້ຮັບໃຊ້.

[28]"ຝ່າຍພວກທ່ານເປັນຜູ້ທີ່ຕິດໝັ້ນຢູ່ກັບເຮົາໃນເວລາຖືກທົດລອງ. [29]ພຣະບິດາໄດ້ຊົງຈັດ
ແຈງແຜ່ນດິນໃຫ້ແກ່ເຮົາຢ່າງໃດ ເຮົາກໍຈັດແຈງແຜ່ນດິນໜຶ່ງໄວ້ສໍາລັບພວກທ່ານທັງຫລາຍ
ເໝືອນກັນ. [30]ເພື່ອພວກທ່ານຈະກິນແລະດື່ມທີ່ໂຕະຂອງເຮົາໃນລາຊະແຜ່ນດິນຂອງເຮົາ ແລະ
ເພື່ອພວກທ່ານຈະນັ່ງເທິງບັນລັງພິພາກສາພວກອິສຣາເອນທັງສິບສອງກະກຸນນັ້ນ.

## ຊົງທໍານວາຍວ່າເປໂຕຈະປະຕິເສດພຣະອົງ

*(ມທ 26:31-35; ມຣກ 14:27-31; ຢຮ 13:36-38)*

[31]"ຊີໂມນ, ຊີໂມນເອີຍ ເບິ່ງແມ! ຊາຕານໄດ້ຂໍເອົາພວກທ່ານໄວ້ ເພື່ອຈະຝັດຮ່ອນພວກ
ທ່ານເໝືອນຝັດເຂົ້າເປືອກ. [32]ແຕ່ເຮົາໄດ້ໄຫວ້ວອນສໍາລັບທ່ານເພື່ອຄວາມເຊື່ອຂອງພວກທ່ານ
ຈະບໍ່ຂາດ ຝ່າຍທ່ານ, ເມື່ອໄດ້ກັບຄືນມາແລ້ວ ຈົ່ງຊູແຮງພີ່ນ້ອງຂອງທ່ານໄວ້." [33]ຝ່າຍຊີໂມນ
ຈິ່ງທູນພຣະອົງວ່າ, "ນາຍເອີຍ, ຂ້ານ້ອຍພ້ອມແລ້ວທີ່ຈະໄປກັບທ່ານເຖິງຈະຕ້ອງຕິດຄຸກຫລືເຖິງ

ຕາຍກໍດີ.” [34]ພຣະອົງຊົງກ່າວວ່າ, “ເປໂຕ ເອີຍ, ເຮົາບອກທ່ານວ່າວັນນີ້ແຫລະ, ກ່ອນໄກ່ຂັນ
ທ່ານຈະໄດ້ປະຕິເສດວ່າບໍ່ຮູ້ຈັກເຮົາເຖິງສາມເທື່ອ.”

## ເລື່ອງກະເປົາເງິນ, ຖົງ, ແລະດາບ

[35]ພຣະອົງໄດ້ຊົງຖາມເຂົາວ່າ, “ເມື່ອເຮົາໄດ້ໃຊ້ທ່ານທັງຫລາຍອອກໄປ ໂດຍບໍ່ມີກະເປົາເງິນ,
ບໍ່ມີຖົງ, ຫລືບໍ່ມີເກີບນັ້ນ ພວກທ່ານໄດ້ຂາດເຂີນສິ່ງໃດແດ່?” ເຂົາທູນຕອບວ່າ, “ບໍ່ໄດ້ຂາດເຂີນ
ສິ່ງໃດ.” [36]ພຣະອົງຊົງກ່າວກັບເຂົາວ່າ, “ແຕ່ດຽວນີ້ໃຜມີກະເປົາເງິນກໍໃຫ້ຖືໄປ ແລະຖົງກໍໃຫ້ຖື
ໄປເໝືອນກັນ ສ່ວນຜູ້ບໍ່ມີດາບກໍໃຫ້ຂາຍເສື້ອໃຫຍ່ຂອງຕົນ ເພື່ອຊື້ດາບດວງໜຶ່ງ. [37]ດ້ວຍເຮົາ
ບອກທ່ານທັງຫລາຍວ່າ ຄຳທີ່ຂຽນໃນພຣະຄຳພີນັ້ນຈະຕ້ອງສຳເລັດໃນເຮົາ ຄືຄຳທີ່ວ່າ ‘ທ່ານ
ຖືກນັບເຂົ້າກັບຄົນອະທຳ’ ເພາະຄຳທີ່ຂຽນໄວ້ກ່ຽວກັບເຮົານັ້ນກໍຈະສຳເລັດ.” [38]ແລະເຂົາທູນວ່າ,
“ນາຍເອີຍ, ເບິ່ງດາບສອງດວງນີ້ແມ!” ພຣະອົງຊົງຕອບເຂົາວ່າ, “ພໍແລ້ວ.”

## ຊົງອ້ອນວອນທີ່ເຄັດເຊມາເນ

*(ມທ 26:36-46; ມຣກ 14:32-42)*

[39]ແລ້ວພຣະອົງໄດ້ສະເດັດອອກໄປຍັງພູໝາກກອກເທດຕາມເຄີຍ ແລະພວກສາວົກໄດ້ຕາມ
ພຣະອົງໄປ. [40]ເມື່ອມາເຖິງບ່ອນນັ້ນແລ້ວ ພຣະອົງຊົງກ່າວກັບເຂົາວ່າ, “ຈົ່ງອ້ອນວອນຢູ່ເພື່ອ
ຈະບໍ່ໄດ້ເຂົ້າໃນການທົດລອງ.” [41]ແລ້ວພຣະອົງໄດ້ສະເດັດອອກຈາກເຂົາໄກປະມານຄວ່າງ
ກ້ອນຫີນເຖິງ ແລະຊົງຄຸເຂົ່າລົງອ້ອນວອນວ່າ, [42]“ພຣະບິດາເອີຍ! ຖ້າພໍພຣະໄທຂໍໃຫ້ຈອກນີ້
ເຄື່ອນຍ້າຍໄປຈາກລູກທ້ອນ! ແຕ່ຢ່າງໃດກໍດີ, ຂໍຢ່າໃຫ້ເປັນໄປຕາມຄວາມປາດຖະໜາຂອງລູກ
ແຕ່ໃຫ້ເປັນຕາມພຣະປະສົງຂອງພຣະອົງເທີນ!”. [43]ແລ້ວມີເທວະດາຕົນໜຶ່ງຈາກສະຫວັນມາ
ປະກົດແກ່ພຣະອົງ ຊູກຳລັງພຣະອົງຂຶ້ນ. [44]ເມື່ອຊົງເກີດເປັນທຸກວຸ້ນວາຍຫລາຍຂຶ້ນພຣະອົງກໍ
ຊົງຕັ້ງພຣະໄທອ້ອນວອນຫລາຍ ເຫື່ອຂອງພຣະອົງເກີດເປັນເໝືອນເລືອດໄຫລຢາດລົງດິນເປັນ
ເມັດໃຫຍ່. [45]ເມື່ອຊົງລຸກຂຶ້ນຈາກການອ້ອນວອນແລ້ວພຣະອົງໄດ້ສະເດັດມາຫາພວກສາວົກ
ແລະຊົງເຫັນເຂົາກຳລັງນອນຫລັບຢູ່ດ້ວຍຄວາມທຸກໂສກ. [46]ພຣະອົງຈິ່ງຊົງກ່າວກັບເຂົາວ່າ,
“ເປັນຫຍັງຈິ່ງນອນຫລັບຢູ່ລຸກຂຶ້ນອ້ອນວອນເພື່ອພວກທ່ານຈະບໍ່ຕົກໃນການທົດລອງ.”

## ຊົງຖືກມອບໄວ້ແລະຈັບໄປ

*(ມທ 26:47-56; ມຣກ 14:43-50; ຢຮ 18:3-11)*

[47]ເມື່ອພຣະອົງຍັງຊົງກ່າວບໍ່ທັນຂາດຄຳ ເບິ່ງແມ! ມີຄົນຈຳນວນຫລາຍ ແລະຜູ້ທີ່ຊື່ວ່າຢູດາ
ຊຶ່ງເປັນຜູ້ໜຶ່ງໃນພວກສິບສອງຄົນນັ້ນ ໄດ້ນຳໜ້າເຂົາມາ ຢູດາໄດ້ຫຍັບເຂົ້າມາໃກ້ພຣະເຢຊູ
ເພື່ອຈະຈູບພຣະອົງ. [48]ແຕ່ພຣະເຢຊູຊົງຖາມວ່າ, “ຢູດາເອີຍ, ທ່ານຈະມອບບຸດມະນຸດດ້ວຍ
ການຈູບຫລື?”. [49]ເມື່ອຄົນທີ່ຢູ່ນຳພຣະອົງເຫັນເຫດການທີ່ບັງເກີດຂຶ້ນນັ້ນ ຈິ່ງທູນພຣະອົງວ່າ,
‘ນາຍເອີຍ, ຈະໃຫ້ພວກຂ້ານ້ອຍເອົາດາບມາຟັນຫລື.” [50]ມີຜູ້ໜຶ່ງໃນພວກສາວົກໄດ້ຟັນຂ້ອຍໃຊ້
ຄົນໜຶ່ງຂອງມະຫາປະໂລຫິດ ຖືກຫູເບື້ອງຂວາຂາດ. [51]ແຕ່ພຣະເຢຊູຊົງກ່າວວ່າ, “ເຊົາເສຍ
ເທາະ” ແລ້ວພຣະອົງຊົງບາຍຫູຄົນນັ້ນເຮັດໃຫ້ດີເປັນປົກກະຕິ. [52]ຝ່າຍພຣະເຢຊູຊົງກ່າວແກ່
ພວກປະໂລຫິດຕົນໃຫຍ່, ກັບພວກນາຍທະຫານທີ່ຮັກສາພຣະວິຫານ, ແລະພວກເຖົ້າແກ່ທີ່ອອກ

ມາຕໍ່ສູ້ພຣະອົງນັ້ນວ່າ, "ທ່ານທັງຫລາຍຖືດາບຖືຄ້ອນອອກມາເໝືອນຕໍ່ສູ້ໂຈນຫລື. [53]ເມື່ອເຮົາຢູ່
ກັບທ່ານທັງຫລາຍໃນບໍລິເວນພຣະວິຫານ ທຸກໆ ວັນນັ້ນ ພວກທ່ານບໍ່ໄດ້ຍື່ນມືຕໍ່ສູ້ເຮົາ ແຕ່ບັດ
ນີ້ເປັນເວລາຂອງພວກທ່ານແລະເປັນເວລາຂອງອຳນາດແຫ່ງຄວາມມືດ."

## ເປໂຕປະຕິເສດພຣະເຢຊູ

*(ມທ 26:57-58, 69-75; ມຣກ 14:53-54, 66-72; ຢຮ 18:12-18, 25-27)*

[54]ເມື່ອໄດ້ຈັບພຣະອົງແລ້ວເຂົາໄດ້ພາໄປ ແລະຄຸມພຣະອົງເຂົ້າໄປໃນສຳນັກຂອງມະຫາປະ-
ໂລຫິດ ຝ່າຍ ເປໂຕ ໄດ້ຕາມໄປໃນລະຍະຫ່າງໄກ. [55]ເມື່ອເຂົາໄດ້ດັງໄຟໃນກາງເດີ່ນບ້ານແລະ
ພາກັນນັ່ງລົງ ເປໂຕກໍເຂົ້ານັ່ງກັບເຂົາ. [56]ມີຍິງໃຊ້ຄົນໜຶ່ງເຫັນ ເປໂຕນັ່ງຢູ່ບ່ອນແສງໄຟສ່ອງ ກໍ
ເພ່ງເບິ່ງແລ້ວເວົ້າວ່າ, "ຄົນຜູ້ນີ້ແຫລະ, ເຄີຍຢູ່ກັບຄົນນັ້ນ." [57]ແຕ່ ເປໂຕ ຕອບປະຕິເສດວ່າ "ຍິງ
ເອີຍ, ຄົນຜູ້ນັ້ນຂ້ອຍບໍ່ຮູ້ຈັກ." [58]ອີກໜ້ອຍໜຶ່ງມີຄົນໜຶ່ງເຫັນ ເປໂຕ ກໍເວົ້າວ່າ, "ໂຕເປັນຄົນໃນ
ພວກນັ້ນເໝືອນກັນ" ເປໂຕ ຈຶ່ງຕອບວ່າ "ຊາຍເອີຍ, ບໍ່ແມ່ນດອກ!". [59]ຢູ່ມາປະມານຊົ່ວໂມງ
ໜຶ່ງມີອີກຄົນໜຶ່ງຢືນຢັນຢ່າງແຂງແຮງ ວ່າ, "ຄັກແທ້ແລ້ວ ຜູ້ນີ້ແຫລະ, ເຄີຍຢູ່ກັບຄົນນັ້ນ
ເພາະເປັນໄທ ຄາລີເລ ເໝືອນກັນ." [60]ແຕ່ ເປໂຕ ໄດ້ຕອບວ່າ, "ຊາຍເອີຍ, ເລື່ອງທີ່ມຶງເວົ້ານັ້ນກູບໍ່
ຮູ້ຈັກ" ໃນທັນໃດນັ້ນ ເມື່ອ ເປໂຕ ເວົ້າຍັງບໍ່ທັນຂາດຄຳໄກ່ກໍຂັນ. [61]ແລະອົງ ພຣະຜູ້ເປັນເຈົ້າ ໄດ້
ຊົງຫລຽວເບິ່ງ ເປໂຕ ແລ້ວ ເປໂຕ ກໍລະນຶກເຖິງຄຳທີ່ອົງ ພຣະຜູ້ເປັນເຈົ້າ ໄດ້ຊົງກ່າວແກ່ຕົນວ່າ,
"ວັນນີ້ກ່ອນໄກ່ຂັນທ່ານຈະປະຕິເສດ ເຮົາ ເຖິງສາມ ເທື່ອ." [62]ແລ້ວ ເປໂຕ ກໍອອກໄປຂ້າງນອກ
ຮ້ອງໄຫ້ເປັນທຸກໜັກໃຈ.

## ການເຍາະເຍີ້ຍທຸບຕີພຣະເຢຊູ

*(ມທ 26:67-68; ມຣກ 14:65)*

[63]ຝ່າຍຄົນທັງຫລາຍທີ່ໄດ້ຄຸມ ພຣະເຢຊູ ກໍໄດ້ເຍາະເຍີ້ຍແລະທຸບຕີພຣະອົງ. [64]ແລະເມື່ອເຂົາ
ໄດ້ເອົາຜ້າມັດພຣະເນດຂອງພຣະອົງແລ້ວ ເຂົາກໍຖາມວ່າ, "ແມ່ນໃຜຕີມຶງ ທວາຍເບິ່ງແມ?".
[65]ເຂົາໄດ້ເວົ້າຄຳຫຍາບຊ້າຕໍ່ພຣະອົງອີກຫລາຍປະການ.

## ພຣະເຢຊູຕໍ່ໜ້າສານສູງສຸດ

*(ມທ 26:59-66; ມຣກ 14:55-64; ຢຮ 18:19-24)*

[66]ຄັນຮຸ່ງເຊົ້າມາແລ້ວພວກເຖົ້າແກ່ຂອງພົນລະເມືອງ, ກັບພວກປະໂລຫິດຕົນໃຫຍ່ແລະພວກ
ນັກທຳໄດ້ມາປະຊຸມກັນ ແລະເຂົາໄດ້ພາພຣະອົງເຂົ້າໄປໃນສານສູງສຸດຂອງເຂົາ. [67]ຈຶ່ງເວົ້າວ່າ,
"ຖ້າເຈົ້າເປັນ ພຣະຄຣິດ ຈົ່ງບອກເຮົາເສຍ" ແຕ່ພຣະອົງຊົງຕອບເຂົາວ່າ, "ເຖິງເຮົາຈະບອກ
ພວກທ່ານ ທ່ານຈະກໍບໍ່ເຊື່ອເຮົາດອກ. [68]ແລະເຖິງເຮົາຈະຖາມພວກທ່ານ ທ່ານກໍຈະບໍ່ຕອບເຮົາ
ຈັກຄຳ. [69]ແຕ່ວ່າຕັ້ງແຕ່ນີ້ໄປບຸດມະນຸດຈະນັ່ງເບື້ອງຂວາຂອງ ພຣະເຈົ້າ ຜູ້ຊົງລິດທານຸພາບ."
[70]ເຂົາທຸກຄົນຈຶ່ງຖາມວ່າ, "ຖ້າຢ່າງນັ້ນເຈົ້າເປັນ ພຣະບຸດ ຂອງ ພຣະເຈົ້າ ຫລື?" ພຣະອົງຊົງຕອບ
ເຂົາວ່າ, "ທ່ານທັງຫລາຍເອງວ່າເຮົາເປັນຢ່າງນັ້ນແຫລະ." [71]ແລະເຂົາໄດ້ເວົ້າວ່າ, "ພວກເຮົາ
ຍັງຈະຕ້ອງການພະຍານອັນໃດອີກ ເພາະຝ່າຍພວກເຮົາໄດ້ຍິນຈາກປາກຂອງມັນເອງແລ້ວ."

# ບົດທີ 23

## ພຣະເຢຊູຕໍ່ໜ້າປີລາດ

*(ມທ 27:1-2, 11-14; ມຣກ 15:1-5; ຢຮ 18:28-38)*

1ແລ້ວຂາປະຊຸມທັງໝົດໄດ້ລຸກຂຶ້ນພາ ພຣະເຢຊູ ໄປຫາ ປີລາດ. 2ແລະ ເຂົາໄດ້ຕັ້ງຕົ້ນຟ້ອງ
ພຣະອົງວ່າ, "ພວກເຮົາໄດ້ພົບຄົນນີ້ກຳລັງຊັກຊວນຊົນຊາດຂອງເຮົາໃຫ້ເຮັດຜິດ ຄືຫ້າມບໍ່ໃຫ້
ເສຍສ່ວຍແກ່ ກາຍຊາ ແລະຍັງເວົ້າວ່າຕົວເອງເປັນ ພຣະຄຣິດ ຄືກະສັດອົງໜຶ່ງ." 3ປີລາດ ຈຶ່ງ
ຖາມ ພຣະເຢຊູ ວ່າ, "ເຈົ້າເປັນກະສັດຂອງຊາດຢິວຫລື?" ພຣະອົງຊົງຕອບວ່າ, "ທ່ານເວົ້ານັ້ນ-
ແລ້ວ." 4ປີລາດ ຈຶ່ງເວົ້າກັບພວກປະໂລຫິດຕົນໃຫຍ່ແລະປະຊາຊົນວ່າ, "ເຮົາບໍ່ເຫັນຜິດໃນຜູ້ນີ້
ຈັກປະການ." 5ແຕ່ເຂົາແຮ່ງກ່າວຄຳແຂງຂຶ້ນວ່າ, "ຄົນຜູ້ນີ້ໄດ້ຍົວະຍົງພົນລະເມືອງໃຫ້ຕື່ນຂຶ້ນ
ແລະສັ່ງສອນທົ່ວແຂວງ ຢູດາຍ ຕັ້ງຕົ້ນແຕ່ແຂວງ ຄາລີເລ ຈົນເຖິງທີ່ນີ້."

## ພຣະເຢຊູຕໍ່ໜ້າເຮໂຣດ

6ເມື່ອ ປີລາດ ໄດ້ຍິນ ເຂົາອອກຊື່ ຄາລີເລ ຈຶ່ງຖາມວ່າ, "ຄົນນີ້ເປັນໄທ ຄາລີເລ ຫລື?". 7ເມື່ອ
ຊາບວ່າພຣະອົງເປັນຄົນຢູ່ຂອບເຂດປົກຄອງຂອງ ເຮໂຣດ ປີລາດ ຈຶ່ງສົ່ງພຣະອົງໄປຫາ ເຮໂຣດ
ຜູ້ກຳລັງພັກຢູ່ໃນກຸງ ເຢຣູຊາເລັມ ໃນເວລານັ້ນ. 8ເມື່ອ ເຮໂຣດ ໄດ້ເຫັນ ພຣະເຢຊູ ກໍມີຄວາມຍິນດີ
ຫລາຍ ດ້ວຍວ່າທ່ານຢາກພົບພຣະອົງແຕ່ເຫິງແລ້ວ ເພາະໄດ້ຍິນເຖິງເລື່ອງຂອງພຣະອົງ ແລະ
ຫວັງວ່າຈະ ເຫັນພຣະອົງຊົງ ເຮັດການອັດສະຈັນບາງປະການ. 9ທ່ານຈຶ່ງຖາມພຣະອົງຫລາຍຂໍ້
ແຕ່ພຣະອົງບໍ່ໄດ້ຊົງຕອບຈັກຢ່າງ. 10ຝ່າຍພວກປະໂລຫິດຕົນໃຫຍ່ ແລະພວກນັກທຳກໍຢືນຂຶ້ນ
ຟ້ອງພຣະອົງຢ່າງແຂງແຮງ. 11ແລະ ເຮໂຣດ ກັບພວກທະຫານຂອງທ່ານໄດ້ດູໝິ່ນ ເຍາະເຍີ້ຍ
ພຣະອົງ ແລະເອົາເສື້ອໂຕງົດງາມມາຫົ່ມໃຫ້ພຣະອົງ ແລ້ວສົ່ງພຣະອົງຄືນໄປຫາປີລາດ. 12ຝ່າຍ
ປີລາດກັບ ເຮໂຣດ ໄດ້ຄືນດີກັນໃນວັນນັ້ນ ດ້ວຍວ່າແຕ່ກ່ອນເປັນສັດຕູກັນ.

## ພຣະເຢຊູຊົງຖືກພິພາກສາໃຫ້ເຖິງສິ້ນພຣະຊົນ

*(ມທ 27:15-26; ມຣກ 15:6-15; ຢຮ 18:39-19:16)*

13ປີລາດ ຈຶ່ງສັ່ງພວກປະໂລຫິດຕົນໃຫຍ່, ພວກເຈົ້ານາຍ, ກັບລາສະດອນໃຫ້ມາປະຊຸມກັນ.
14ແລ້ວກ່າວແກ່ເຂົາວ່າ, "ທ່ານທັງຫລາຍໄດ້ພາຄົນນີ້ມາຫາເຮົາຟ້ອງວ່າເປັນຄົນຊັກຊວນລາສະ-
ດອນໃຫ້ຫລົງຜິດໄປ ແລະເບິ່ງແມ! ເຮົາໄດ້ສືບສວນຕໍ່ໜ້າພວກທ່ານ ແລະບໍ່ເຫັນວ່າຄົນນີ້ມີ
ຄວາມຜິດ ໃນຂໍ້ທີ່ທ່ານທັງຫລາຍຟ້ອງນັ້ນ. 15ແລະ ເຮໂຣດ ກໍບໍ່ ເຫັນ ມີຄວາມຜິດ ເໝືອນກັນ
ເພາະວ່າທ່ານໄດ້ສົ່ງຕົວຄົນນີ້ກັບມາຫາເຮົາອີກແລ້ວ ເບິ່ງແມ! ຄົນຜູ້ນີ້ບໍ່ໄດ້ເຮັດຜິດອັນໃດທີ່
ສົມຄວນຈະຖືກໂທດເຖິງຕາຍ. 16ເຫດສັນນັ້ນເມື່ອເຮົາຂ້ຽນຜູ້ນີ້ແລ້ວກໍຈະປ່ອຍ." 17[ດ້ວຍວ່າໃນ
ງານເທດສະການນັ້ນທ່ານຕ້ອງປ່ອຍຄົນໜຶ່ງໃຫ້ເຂົາ.]

18ແຕ່ຄົນທັງປວງຮ້ອງຂຶ້ນພ້ອມກັນວ່າ, "ເອົາມັນໄປຂ້າເສຍ ແລ້ວຈຶ່ງປ່ອຍ ບາຣາບາ ໃຫ້ພວກ
ເຮົາ." 19ສ່ວນ ບາຣາບາ ນັ້ນກໍຍັງຕິດຄຸກຢູ່ ເພາະການຈະລາຈົນທີ່ເກີດຂຶ້ນໃນເມືອງແລະການ
ຂ້າຄົນ. 20ສ່ວນ ປີລາດ ຍັງມີນ້ຳໃຈຢາກປ່ອຍ ພຣະເຢຊູ ຈຶ່ງກ່າວກັບເຂົາອີກ. 21ແຕ່ເຂົາໄດ້ຮ້ອງ
ຂຶ້ນວ່າ, "ຄຶງໄວ້, ຄຶງມັນໄວ້ທີ່ໄມ້ກາງແຂນ!". 22ປີລາດ ຈຶ່ງກ່າວກັບເຂົາເປັນເທື່ອທີສາມວ່າ,

"ຄຶງເຮັດຫຍັງ ຄົນນີ້ໄດ້ເຮັດຜິດອັນໃດ ເຮົາບໍ່ໄດ້ເຫັນວ່າມີຜິດອັນໃດທີ່ສົມຄວນຈະໃຫ້ຖືກໂທດ
ເຖິງຕາຍ ເຫດສັນນັ້ນເມື່ອເຮົາຂ້ຽນແລ້ວກໍຈະປ່ອຍເສຍ." 23ຝ່າຍຄົນທັງປວງກໍພ້ອມກັນຮ້ອງ
ສຽງດັງ ເພື່ອຈະໃຫ້ຄຶງພຣະອົງໄວ້ທີ່ໄມ້ກາງແຂນ ແລະສຽງຂອງເຂົາກໍຊະນະ. 24ແລ້ວປີລາດ
ຈຶ່ງຕັດສິນໃຫ້ເປັນໄປຕາມຄວາມຂໍຮ້ອງຂອງເຂົາ. 25ທ່ານຈຶ່ງປ່ອຍຄົນທີ່ເຂົາຂໍນັ້ນ ຄືຜູ້ທີ່ຕິດຄຸກ
ຢູ່ເພາະການຈະລາຈົນແລະການຂ້າຄົນ ແຕ່ໄດ້ມອບພຣະເຢຊູໄວ້ຕາມຄວາມຕ້ອງການຂອງ
ເຂົາ.

## ການຄຶງໄວ້ທີ່ໄມ້ກາງແຂນ

*(ມທ 27:32-44; ມຣກ 15:21-32; ຢຮ 19:17-27)*

26ເມື່ອເຂົາພາພຣະອົງອອກໄປ ເຂົາໄດ້ຈັບຊີໂມນໄທກີເຣເນທີ່ກຳລັງມາຈາກບ້ານນອກ
ແລ້ວເອົາໄມ້ກາງແຂນວາງໃສ່ໃຫ້ແບກຕາມພຣະເຢຊູໄປ. 27ປະຊາຊົນຈຳນວນຫລວງຫລາຍໄດ້
ຕາມພຣະອົງໄປ ທັງພວກແມ່ຍິງທີ່ຕີເອິກຮ້ອງໄຫ້ເພາະພຣະອົງ. 28ພຣະເຢຊູຊົງຫລຽວຫລັງຫາ
ເຂົາແລ້ວຊົງກ່າວວ່າ, "ລູກສາວເຢຣູຊາເລັມເອີຍ, ຢ່າຊູ່ຮ້ອງໄຫ້ສົງສານເຮົາ ແຕ່ຈົ່ງຮ້ອງໄຫ້
ສົງສານຕົນເອງ ແລະສົງສານລູກທັງຫລາຍຂອງຕົນ. 29ດ້ວຍວ່າເບິ່ງແມ, ຈະມີເວລາໜຶ່ງທີ່ເຂົາ
ຈະເວົ້າວ່າ, 'ແມ່ຍິງເຫລົ່ານັ້ນທີ່ເປັນໝັນ, ທ້ອງທີ່ບໍ່ເກີດລູກ, ແລະຫົວນົມທີ່ລູກບໍ່ໄດ້ດູດຈັກເທື່ອ
ກໍເປັນສຸກ'. 30ໃນເວລານັ້ນເຂົາຈະຕັ້ງຕົ້ນກ່າວກັບພູທັງຫລາຍວ່າ 'ຂໍຈົ່ງເຈື່ອນລົງມາທັບເຮົາ'
ແລະກ່າວກັບໂນນທັງຫລາຍວ່າ 'ຈົ່ງປົກບັງເຮົາໄວ້'. 31ເພາະວ່າຖ້າເຂົາເຮັດການຢ່າງນີ້ແກ່ຕົ້ນ-
ໄມ້ສົດ ເຂົາຈະເຮັດຢ່າງໃດໜໍແກ່ຕົ້ນໄມ້ທີ່ແຫ້ງແລ້ວ."

32ມີອີກສອງຄົນທີ່ເປັນຜູ້ຮ້າຍ ຊຶ່ງເຂົາໄດ້ຄຸມມາເໝືອນກັນເພື່ອຂ້າເສຍພ້ອມກັບພຣະອົງ.
33ເມື່ອມາເຖິງບ່ອນໜຶ່ງທີ່ເອີ້ນວ່າກະໂຫລກຫົວ ເຂົາກໍຄຶງພຣະອົງໄວ້ບ່ອນນັ້ນທີ່ໄມ້ກາງແຂນ
ພ້ອມກັບຜູ້ຮ້າຍສອງຄົນ ເບື້ອງຂວາຄົນໜຶ່ງ, ເບື້ອງຊ້າຍຄົນໜຶ່ງ. 34ຝ່າຍພຣະເຢຊູຈຶ່ງຊົງ
ອ້ອນວອນວ່າ, "ໂອ ພຣະບິດາເຈົ້າ, ຂໍໂຜດອະໄພໂທດເຂົາ ເພາະວ່າເຂົາບໍ່ຮູ້ຈັກວ່າເຂົາກຳລັງ
ເຮັດອັນໃດ" ແລ້ວເຂົາໄດ້ເອົາເຄື່ອງທົງຂອງພຣະອົງໄປຈົກສະຫລາກແບ່ງປັນກັນ. 35ຝ່າຍປະ-
ຊາຊົນກໍຢືນເບິ່ງແລະພວກເຈົ້ານາຍໄດ້ເຍາະເຍີ້ຍພຣະອົງວ່າ, "ມັນໄດ້ຊ່ອຍຄົນອື່ນໃຫ້ລອດພົ້ນ
ຖ້າຄົນນີ້ເປັນພຣະຄຣິດທີ່ພຣະເຈົ້າໄດ້ຊົງເລືອກໄວ້ນັ້ນ ໃຫ້ມັນຊ່ອຍຕົນເອງເສຍ." 36ພວກທະ-
ຫານໄດ້ເຍາະເຍີ້ຍພຣະອົງເໝືອນກັນ ເຂົາໄດ້ເຂົ້າມາເອົາເຫລົ້າແວງສົ້ມຖວາຍພຣະອົງ. 37ໂດຍ
ເວົ້າວ່າ, "ຖ້າເຈົ້າເປັນກະສັດຊາດຢິວ ຈົ່ງຊ່ອຍຕົວເອງໃຫ້ພົ້ນເສຍ." 38ແລະມີຄຳຂຽນໄວ້ເທິງ
ພຣະອົງວ່າ, "ຜູ້ນີ້ຄືກະສັດຂອງຊາດຢິວ."

39ຝ່າຍຄົນໜຶ່ງໃນຜູ້ຮ້າຍທີ່ຖືກຄຶງໄວ້ ໄດ້ເວົ້າໝິ່ນປະໝາດຕໍ່ພຣະອົງວ່າ, "ເຈົ້າເປັນພຣະ-
ຄຣິດ ບໍ່ແມ່ນຫລື ຈົ່ງຊ່ອຍຕົນເອງກັບຊ່ອຍເຮົາໃຫ້ພົ້ນເສຍ." 40ແຕ່ຄົນໜຶ່ງໄດ້ຫ້າມວ່າ, "ໂຕບໍ່
ຢ້ານພຣະເຈົ້າຫລື ເພາະໂຕກໍຖືກໂທດເໝືອນກັນ. 41ຝ່າຍເຮົາກໍສົມກັບໂທດນັ້ນແທ້ ເພາະເຮົາ
ກຳລັງໄດ້ຮັບສົມກັບການທີ່ເຮົາເຮັດນັ້ນ ແຕ່ຜູ້ນີ້ບໍ່ໄດ້ເຮັດຜິດອັນໃດ." 42ແລ້ວຄົນນັ້ນຈຶ່ງທູນວ່າ,
"ພຣະເຢຊູເອີຍ, ເມື່ອໃດທ່ານມາໃນແຜ່ນດິນຂອງທ່ານ ຂໍຈົ່ງລະນຶກເຖິງຂ້ານ້ອຍແດ່." 43ຝ່າຍ
ພຣະອົງຊົງຕອບວ່າ, "ເຮົາບອກທ່ານຕາມຈິງວ່າ ວັນນີ້ທ່ານຈະຢູ່ກັບເຮົາໃນທີ່ສຸຂະເສີມ."

## ຊົງສິ້ນພຣະຊົນ

*(ມທ 27:45-56; ມຣກ 15:33-41; ຢຮ 19:28-30)*

44ເວລານັ້ນພໍປະມານທ່ຽງ[ກ] ກໍບັງເກີດມືດມົວທົ່ວແຜ່ນດິນຈົນເຖິງເກົ້າໂມງ.[ຂ] 45ແສງຕາ
ເວັນກໍມືດໄປ ແລະຜ້າກັ້ງໃນພຣະວິຫານກໍຖືກຊົງຈີກເຄິ່ງກາງ. 46ແລ້ວພຣະເຢຊູຊົງຮ້ອງສຽງ
ດັງກ່າວວ່າ, "ພຣະບິດາເອີຍ, ຂ້ານ້ອຍຂໍຝາກຈິດວິນຍານຂອງຂ້ານ້ອຍໄວ້ໃນພຣະຫັດຂອງ
ພຣະອົງ" ເມື່ອຊົງກ່າວຢ່າງນັ້ນແລ້ວກໍສິ້ນພຣະຊົນ.

47ເມື່ອນາຍຮ້ອຍທະຫານໄດ້ເຫັນການທີ່ເກີດຂຶ້ນນັ້ນ ຈຶ່ງສັນລະເສີນພຣະເຈົ້າວ່າ, "ຈິງແທ້-
ແລ້ວ, ທ່ານຜູ້ນີ້ບໍ່ມີຄວາມຜິດ." 48ຄົນທັງປວງທີ່ມາຊຸມນຸມເບິ່ງການແປກປະຫລາດນັ້ນ ເມື່ອໄດ້
ເຫັນເຫດການທີ່ເກີດຂຶ້ນນັ້ນ ກໍພາກັນຕີເອິກກັບຄືນໄປ. 49ຄົນທັງຫລາຍທີ່ຮູ້ຈັກພຣະອົງກັບ
ພວກແມ່ຍິງທີ່ໄດ້ຕາມມາພ້ອມພຣະອົງແຕ່ແຂວງຄາລີເລ ກໍຢືນເບິ່ງການທັງຫລາຍນີ້ຢູ່ແຕ່ໄກ.

## ການປົງພຣະສົບຂອງພຣະເຢຊູ

*(ມທ 27:57-61; ມຣກ 15:42-47; ຢຮ 19:38-42)*

50ແລະເບິ່ງແມ, ມີຊາຍຄົນໜຶ່ງຊື່ໂຢເຊັບ ເປັນສະມາຊິກແຫ່ງສານສູງສຸດ ທ່ານເປັນຄົນດີ
ແລະສັດຊື່. 51ທ່ານຜູ້ນີ້ບໍ່ໄດ້ເຫັນດີຕາມມະຕິແລະການເຮັດຂອງເຂົານັ້ນ ທ່ານເປັນໄທບ້ານອາ-
ຣີມາທາຍ ຊຶ່ງເປັນບ້ານຂອງຊາດຢິວ ທັງເປັນຜູ້ຄອຍຖ້າລາຊະອານາຈັກຂອງພຣະເຈົ້າ.
52ທ່ານຜູ້ນີ້ໄດ້ເຂົ້າໄປຫາປີລາດຂໍເອົາພຣະສົບພຣະເຢຊູ. 53ແລະເມື່ອໄດ້ອັນເຊີນພຣະສົບລົງ
ແລ້ວ ທ່ານກໍເອົາຜ້າປ່ານຫໍ່ຫຸ້ມໄວ້ ແລ້ວອັນເຊີນພຣະສົບໄປບັນຈຸວາງໄວ້ໃນອຸບໂມງ ທີ່ສະກັດ
ໄວ້ໃນຫີນຊຶ່ງຍັງບໍ່ໄດ້ວາງສົບໃຜຈັກເທື່ອ. 54ວັນນັ້ນເປັນວັນຈັດຕຽມ ແລະວັນຊະບາໂຕກໍເກືອບ
ຈະເຖິງແລ້ວ. 55ຝ່າຍພວກແມ່ຍິງທີ່ຕາມພຣະອົງມາຈາກແຂວງຄາລີເລກໍໄດ້ຕາມໄປ ແລະໄດ້
ເຫັນອຸບໂມງ ກັບໄດ້ເຫັນເຂົາບັນຈຸວາງພຣະສົບຂອງພຣະອົງໄວ້ຢ່າງໃດ. 56ແລ້ວເຂົາກໍໄດ້ກັບ
ໄປຈັດແຈງເຄື່ອງແລະນ້ຳມັນຫອມ.

ໃນວັນຊະບາໂຕນັ້ນເຂົາກໍໄດ້ພັກການຕາມພຣະບັນຍັດ.

# ບົດທີ 24

## ການຊົງຄືນພຣະຊົນ

*(ມທ 28:1-10; ມຣກ 16:1-8; ຢຮ 20:1-10)*

1ແຕ່ຮຸ່ງເຊົ້າວັນຕົ້ນສັບປະດາ ຜູ້ຍິງເຫລົ່ານັ້ນໄດ້ນຳເອົາເຄື່ອງຫອມທີ່ຈັດໄວ້ນັ້ນມາເຖິງອຸບ
ໂມງ. 2ແລະເຂົາໄດ້ເຫັນກ້ອນຫີນນັ້ນກິ້ງອອກຈາກອຸບໂມງແລ້ວ. 3ເມື່ອເຂົ້າໄປທັງໃນແລ້ວເຂົາ
ກໍບໍ່ເຫັນພຣະສົບ. 4ເມື່ອເຂົາກຳລັງຄຶດສັບສົນເທ ດ້ວຍເຫດການນັ້ນ ເບິ່ງແມ, ມີຊາຍສອງຄົນ
ຢືນຢູ່ໃກ້ເຂົາ ນຸ່ງເຄື່ອງອັນງົດງາມຈົນເຫລື້ອມຕາ. 5ຝ່າຍແມ່ຍິງເຫລົ່ານັ້ນກໍຢ້ານແລະກົ້ມໜ້າລົງ
ເຖິງດິນ ສອງຄົນນັ້ນໄດ້ຖາມເຂົາວ່າ, "ພວກນາງຊອກຫາຄົນເປັນໃນໝູ່ຄົນຕາຍເຮັດຫຍັງ?
6[ພຣະອົງບໍ່ປະທັບຢູ່ທີ່ນີ້ ແຕ່ຖືກຊົງບັນດານໃຫ້ເປັນຄືນມາແລ້ວ] ຈົ່ງລະນຶກເຖິງຄຳທີ່ພຣະອົງ

[ກ]ປັດຈຸບັນນີ້ເຄີຍເວົ້າວ່າເວລາທ່ຽງ. [ຂ]ປັດຈຸບັນເຄີຍເວົ້າວ່າບ່າຍສາມໂມງ.

ຊົງກ່າວກັບທ່ານທັງຫລາຍ ເມື່ອພຣະອົງຍັງຢູ່ໃນແຂວງຄາລີເລນັ້ນ. [7]ວ່າບຸດມະນຸດຈະຕ້ອງຖືກ
ມອບໄວ້ໃນມືຄົນບາບ, ຈະຖືກຄຶງໄວ້ທີ່ໄມ້ກາງແຂນ, ແລະໃນວັນຖ້ວນສາມກໍຈະຄືນມາອີກ.”
[8]ແມ່ຍິງເຫລົ່ານັ້ນໄດ້ລະນຶກເຖິງຖ້ອຍຄຳຂອງພຣະອົງ. [9]ແລະເມື່ອໄດ້ກັບໄປຈາກອຸບໂມງແລ້ວ
ເຂົາໄດ້ບອກເຫດການທັງປວງນັ້ນແກ່ພວກສິບເອັດຄົນນັ້ນແລະຄົນອື່ນໆ ເໝືອນກັນ. [10]ຜູ້ທີ່ໄດ້
ບອກເຫດການນັ້ນແກ່ພວກອັກຄະສາວົກ ຄືມາຣີອາມັກດາລາ, ໂຢຮັນນາ, ມາຣີອາແມ່ຂອງ
ຢາໂກໂບ, ພ້ອມດ້ວຍຜູ້ອື່ນໆ ທີ່ຢູ່ກັບເຂົາ. [11]ຝ່າຍພວກອັກຄະສາວົກບໍ່ເຊື່ອຄຳເວົ້າຂອງພວກ
ແມ່ຍິງ ເພາະຖືວ່າເປັນຄຳເວົ້າເປົ່າໆ. [12][ແຕ່ເປໂຕໄດ້ລຸກຂຶ້ນແລ່ນມາຍັງອຸບໂມງ ເມື່ອກົ້ມລົງກໍ
ເຫັນແຕ່ຜ້າຫໍ່ເທົ່ານັ້ນ ຈຶ່ງກັບໄປດ້ວຍຄວາມຄຶດປະຫລາດໃຈເຖິງເຫດການຊຶ່ງເກີດຂຶ້ນນັ້ນ.]

## ການເດີນທາງໄປເອມາອູດ

*(ມຣກ 16:12-13)*

[13]ແລະເບິ່ງແມ, ໃນວັນດຽວນັ້ນຍັງມີສາວົກສອງຄົນກຳລັງໄປບ້ານເອມາອູດ ຊຶ່ງໄກຈາກກຸງ
ເຢຣູຊາເລັມປະມານຫົກພັນວາ. [14]ເຂົາທັງສອງໄດ້ສົນທະນາກັນເຖິງເຫດການທີ່ເກີດຂຶ້ນນັ້ນ.
[15]ເມື່ອເຂົາກຳລັງສົນທະນາໄຕ່ຖາມກັນຢູ່ ພຣະເຢຊູກໍສະເດັດເຂົ້າມາໃກ້ເຂົາ ແລ້ວໄດ້ສະເດັດ
ຮ່ວມທາງກັບເຂົາໄປ. [16]ແຕ່ຕາຂອງເຂົາໄດ້ຖືກຊົງບັງລັບໄວ້ ເພື່ອບໍ່ໃຫ້ເຂົາຮູ້ຈັກພຣະອົງ.
[17]ພຣະອົງຊົງຖາມເຂົາວ່າ, “ເມື່ອມາຕາມທາງພວກທ່ານໄຕ່ຖາມກັນເຖິງເລື່ອງໃດ?” ແລະເຂົາ
ໄດ້ຢຸດຢືນຢູ່ດ້ວຍໜ້າໂສກເສົ້າ. [18]ແລ້ວຄົນໜຶ່ງຊື່ກະໂລປາ ໄດ້ທູນຖາມພຣະອົງວ່າ, “ໃນບັນ-
ດາແຂກເມືອງທີ່ມາອາໃສຢູ່ໃນກຸງເຢຣູຊາເລັມ ມີແຕ່ທ່ານຜູ້ດຽວຫລື ທີ່ບໍ່ຮູ້ເຫດການຊຶ່ງເກີດຂຶ້ນ
ທີ່ນັ້ນໃນລະຫວ່າງວັນເຫລົ່ານີ້?”. [19]ພຣະອົງຊົງຖາມເຂົາວ່າ, “ເຫດການອັນໃດ?” ເຂົາທູນ
ຕອບວ່າ, “ເລື່ອງເຢຊູໄທນາຊາເຣັດທີ່ສະແດງຕົວເປັນຜູ້ປະກາດພຣະທຳປະກອບດ້ວຍລິດເດດ
ໃນກິດຈະການແລະໃນຖ້ອຍຄຳຕໍ່ພຣະພັກພຣະເຈົ້າແລະຕໍ່ໜ້າພົນລະເມືອງທັງໝົດ. [20]ຄືຜູ້ທີ່
ພວກປະໂລຫິດຕົນໃຫຍ່ແລະພວກເຈົ້ານາຍຂອງເຮົາ ໄດ້ມອບເພິ່ນໄວ້ໃຫ້ຕັດສິນລົງໂທດເຖິງ
ຕາຍ ແລະໄດ້ຄຶງໄວ້ທີ່ໄມ້ກາງແຂນ. [21]ແຕ່ເຮົາທັງຫລາຍຫວັງໃຈວ່າ ຈະແມ່ນທ່ານຜູ້ນີ້ແຫລະ,
ທີ່ຈະໄຖ່ຊົນຊາດອິສຣາເອນໃຫ້ພົ້ນ ຫລາຍກວ່ານັ້ນອີກ, ວັນນີ້ເປັນວັນຖ້ວນສາມຕັ້ງແຕ່ເຫດ-
ການນັ້ນເກີດຂຶ້ນ. [22]ມີແມ່ຍິງລາງຄົນໃນພວກເຮົາໄດ້ໄປເຖິງອຸບໂມງແຕ່ຮຸ່ງເຊົ້າ ເຂົາໄດ້ເຮັດໃຫ້
ພວກເຮົາປະຫລາດໃຈຫລາຍ. [23]ຄືເຂົາບໍ່ໄດ້ເຫັນສົບຂອງທ່ານ ຈຶ່ງມາບອກວ່າໄດ້ເຫັນນິມິດເປັນ
ເທວະດາ ແລະເທວະດາໄດ້ບອກວ່າທ່ານມີຊີວິດຢູ່. [24]ບາງຄົນທີ່ຢູ່ກັບພວກເຮົາກໍໄດ້ໄປເຖິງອຸບ
ໂມງ ແລະໄດ້ພົບເໝືອນພວກແມ່ຍິງນັ້ນໄດ້ບອກ ແຕ່ທ່ານຜູ້ນັ້ນເຂົາບໍ່ໄດ້ເຫັນ.” [25]ພຣະເຢຊູຊົງ
ກ່າວແກ່ສອງຄົນນັ້ນວ່າ, “ໂອ ຄົນໂງ່, ຜູ້ມີໃຈເສີຍຊ້າໃນການເຊື່ອບັນດາຖ້ອຍຄຳ ຊຶ່ງພວກຜູ້
ປະກາດພຣະທຳໄດ້ກ່າວໄວ້ນັ້ນ. [26]ຈຳເປັນທີ່ພຣະຄຣິດຈະຕ້ອງທົນທຸກທໍລະມານຢ່າງນັ້ນ
ແລ້ວເຂົ້າໄປໃນລັດສະໝີຂອງພຣະອົງ ບໍ່ແມ່ນຫລື.” [27]ພຣະອົງຈຶ່ງຊົງອະທິບາຍພຣະທຳພີທັງ
ໝົດທີ່ກ່ຽວກັບພຣະອົງເອງໃຫ້ເຂົາຟັງ ຕັ້ງແຕ່ໂມເຊແລະບັນດາຜູ້ປະກາດພຣະທຳ.

[28]ເມື່ອເຂົາມາໃກ້ບ້ານທີ່ຈະໄປນັ້ນ ພຣະອົງຊົງເຮັດເໝືອນກັບວ່າຈະສະເດັດເລີຍໄປ. [29]ແຕ່
ເຂົາທັງສອງໄດ້ໜ່ວງໜ່ຽວທູນພຣະອົງວ່າ, “ເຊີນທ່ານມາພັກເຊົາຢູ່ກັບເຮົາ ເພາະວ່າເວລາກໍ

ຈວນຈະຄໍ່າແລ້ວ ແລະວັນກໍລ່ວງໄປຫລາຍແລ້ວ.”
30ຢູ່ມາເມື່ອຊົງນັ່ງໂຕະຮ່ວມເຂົາ ພຣະອົງຊົງຈັບເອົາເຂົ້າຈີ່ມາໂມທະນາພຣະຄຸນ ແລ້ວຊົງຫັກ
ຍື່ນໃຫ້ເຂົາ. 31ແລະຕາຂອງເຂົາກໍຖືກຊົງປົດອອກ ແລ້ວພຣະອົງກໍຊົງຫາຍໄປຈາກເຂົາເສຍ.
32ເຂົາຈຶ່ງເວົ້າກັນວ່າ, “ເມື່ອພຣະອົງຊົງເວົ້ານໍາເຮົາຕາມທາງ ແລະໄດ້ຊົງອະທິບາຍພຣະຄໍາພີໃຫ້
ເຮົາຟັງນັ້ນ ໃຈຂອງເຮົາກໍຮ້ອນຮົນເໝືອນໄຟພາຍໃນເຮົາ ບໍ່ແມ່ນຫລື.” 33ໃນໂມງນັ້ນເຂົາທັງ
ສອງກໍລຸກຂຶ້ນກັບໄປຍັງກຸງເຢຣູຊາເລັມ ແລະໄດ້ພົບສິບເອັດຄົນນັ້ນຊຸມນຸມກັນຢູ່ພ້ອມກັບພັກ
ພວກ. 34ກໍາລັງເວົ້າກັນວ່າ, “ແມ່ນອົງພຣະຜູ້ເປັນເຈົ້າຊົງເປັນຄືນມາແນ່ແທ້ ແລະໄດ້ຊົງປະກົດ
ແກ່ຊີໂມນ.” 35ຝ່າຍສອງຄົນນັ້ນໄດ້ເລົ່າຍັງເຫດການທີ່ເກີດຂຶ້ນຕາມທາງ ແລະການທີ່ພຣະອົງ
ໄດ້ຊົງເຮັດໃຫ້ເຂົາຮູ້ຈັກພຣະອົງເອງໂດຍການຊົງຫັກເຂົ້າຈີ່ນັ້ນ.

## ພຣະເຢຊູຊົງປະກົດແກ່ພວກສາວົກ

*(ມທ 28:16-20; ມຣກ 16:14-18; ຢຮ 20:19-23; ກຈກ 1:6-8)*

36ເມື່ອເຂົາທັງສອງກໍາລັງເລົ່າເຫດການທັງປວງນັ້ນຢູ່ ອົງພຣະເຢຊູໄດ້ຊົງຢືນຢູ່ຖ້າມກາງ
ເຂົາ [ໂດຍຊົງກ່າວວ່າ, “ສັນຕິສຸກຈົ່ງມີແກ່ທ່ານທັງຫລາຍ”]. 37ຝ່າຍເຂົາກໍຢ້ານສະດຸ້ງຕົກໃຈ
ໂດຍຄຶດວ່າເຫັນຜີ. 38ພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ, “ທ່ານທັງຫລາຍວຸ້ນວາຍໄປເຮັດຫຍັງ
ດ້ວຍເຫດໃດຄວາມຄຶດສັບສົນເຫຈຶ່ງເກີດຂຶ້ນໃນໃຈຂອງພວກທ່ານ. 39ຈົ່ງເບິ່ງມືແລະຕີນຂອງ
ເຮົາວ່າແມ່ນເຮົາເອງ ຈົ່ງຄໍາເບິ່ງຕົວເຮົາ ເພາະວ່າຜີບໍ່ມີເນື້ອບໍ່ມີກະດູກເໝືອນກັບທ່ານເຫັນເຮົາ
ມີຢູ່ນີ້.” 40ເມື່ອຊົງກ່າວດັ່ງນັ້ນແລ້ວ ພຣະອົງກໍຊົງສະແດງພຣະຫັດແລະພຣະບາດໃຫ້ເຂົາເຫັນ.
41ເມື່ອເຂົາຍັງບໍ່ວາງໃຈເຊື່ອເພາະຄວາມຍິນດີແລະປະຫລາດໃຈຢູ່ ພຣະອົງຈຶ່ງຊົງຖາມເຂົາວ່າ,
“ທີ່ນີ້ພວກທ່ານມີຫຍັງກິນແດ່ຫລື?”. 42ແລະເຂົາກໍເອົາປາປີ້ງຕ່ອນໜຶ່ງມາຖວາຍພຣະອົງ.
43ພຣະອົງຊົງຮັບມາສະເຫວີຍຕໍ່ໜ້າເຂົາ.
44ພຣະອົງຊົງກ່າວແກ່ເຂົາວ່າ, “ນີ້ແຫລະ, ຄືຖ້ອຍຄໍາຂອງເຂົາ ຊຶ່ງເຮົາໄດ້ບອກໄວ້ແກ່ທ່ານ
ທັງຫລາຍ ເມື່ອເຮົາຍັງຢູ່ກັບພວກທ່ານວ່າບັນດາຄໍາທີ່ຂຽນໄວ້ເຖິງເຮົາໃນບັນຍັດຂອງໂມເຊ,
ໃນຄໍາພີຂອງພວກຜູ້ປະກາດພຣະທໍາ, ແລະໃນຄໍາພີເພງສັນລະເສີນນັ້ນຈໍາເປັນຈະຕ້ອງສໍາ-
ເລັດ.” 45ເມື່ອນັ້ນພຣະອົງໄດ້ຊົງບັນດົນຈິດໃຈຂອງເຂົາ ເພື່ອໃຫ້ເຂົາເຂົ້າໃຈພຣະຄໍາພີ. 46ພຣະ-
ອົງຊົງກ່າວແກ່ເຂົາວ່າ, “ມີຄໍາຂຽນໄວ້ຢ່າງນີ້ ພຣະຄຣິດຈະຕ້ອງທົນທຸກທໍລະມານ, ແລະຊົງ
ເປັນຄືນມາຈາກຕາຍໃນວັນຖ້ວນສາມ. 47ແລະຈະຕ້ອງປະກາດທົ່ວທຸກປະເທດໃນພຣະນາມ
ຂອງພຣະອົງໃຫ້ເຂົາຖິ້ມໃຈເກົ່າເອົາໃຈໃໝ່ຮັບການຍົກບາບໂທດ ຕັ້ງແຕ່ກຸງເຢຣູຊາເລັມໄປ.
48ຝ່າຍທ່ານທັງຫລາຍເປັນພະຍານໃນການທັງຫລາຍນັ້ນ. 49ແລະເບິ່ງແມ, ອັນທີ່ພຣະບິດາ
ຂອງເຮົາໄດ້ຊົງສັນຍາໄວ້ນັ້ນ ເຮົາກໍໃຊ້ມາເຖິງທ່ານທັງຫລາຍ ແຕ່ຝ່າຍພວກທ່ານຈົ່ງຄອຍຢູ່ໃນ
ກຸງ ຈົນກວ່າພວກທ່ານຈະໄດ້ປະກອບດ້ວຍລິດເດດທີ່ມາຈາກເບື້ອງເທິງ.”

## ການສະເດັດສູ່ສະຫວັນ

*(ມທ 16:19-20; ກຈກ 1:9-11)*

50ພຣະອົງຈຶ່ງຊົງພາເຂົາອອກໄປເຖິງບ້ານເບັດທານີ ແລະຊົງຍົກພຣະຫັດອວຍພອນເຂົາ.

51ເມື່ອຊົງອວຍພອນຢູ່ນັ້ນ ພຣະອົງໄດ້ສະເດັດຈາກເຂົາໄປ [ແລະຊົງຖືກຮັບຂຶ້ນໄປສູ່ສະຫວັນ].
52ສ່ວນເຂົາ [ເມື່ອຂາບລົງນະມັດສະການພຣະອົງແລ້ວ] ກໍກັບໄປຍັງກຸງເຢຣູຊາເລັມດ້ວຍ
ຄວາມຍິນດີຫລາຍ. 53ແລະທຸກໆ ວັນເຂົາທັງຫລາຍໄດ້ຢູ່ໃນບໍລິເວນພຣະວິຫານ ສັນລະເສີນ
ໂມທະນາຂອບພຣະຄຸນຂອງພຣະເຈົ້າ.

* * *

# ຂ່າວປະເສີດເລື່ອງພຣະເຢຊູຄຣິດ
## ຮຽບຮຽງໂດຍ
# ໂຢຮັນ

## ບົດທີ 1
### ພຣະທຳບັງເກີດເປັນມະນຸດ

1ເມື່ອຕົ້ນເດີມນັ້ນພຣະທຳຊົງເປັນຢູ່ແລ້ວ ພຣະທຳນັ້ນຊົງສະຖິດຢູ່ກັບ ພຣະເຈົ້າ ພຣະທຳນັ້ນ
ແຫລະ, ຊົງເປັນ ພຣະເຈົ້າ. 2ເມື່ອຕົ້ນເດີມນັ້ນ ພຣະທຳຊົງສະຖິດຢູ່ກັບ ພຣະເຈົ້າ. 3ພຣະເຈົ້າ
ຊົງສ້າງສິ່ງທັງປວງຂຶ້ນມາໂດຍພຣະທຳ ໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງທີ່ເປັນມາໂດຍ
ນອກຈາກພຣະທຳ. 4ພຣະທຳນັ້ນຊົງມີຊີວິດຢູ່ໃນພຣະອົງເອງ ແລະຊີວິດນັ້ນເປັນຄວາມສະ-
ຫວ່າງຂອງມະນຸດສະໂລກ. 5ຄວາມສະຫວ່າງກໍສ່ອງເຂົ້າມາໃນຄວາມມືດ ແລະຄວາມມືດນັ້ນບໍ່
ໄດ້ຊະນະຕໍ່ຄວາມສະຫວ່າງ.

6ແລະເກີດມີຊາຍຄົນໜຶ່ງທີ່ ພຣະເຈົ້າຊົງໃຊ້ມາ ຊື່ວ່າໂຢຮັນ. 7ທ່ານໄດ້ມາເປັນພະຍານ ເພື່ອ
ອ້າງຄວາມພະຍານເລື່ອງຄວາມສະຫວ່າງນັ້ນ ເພື່ອຄົນທັງປວງຈະໄດ້ເຊື່ອດ້ວຍທ່ານ. 8ທ່ານບໍ່
ແມ່ນຄວາມສະຫວ່າງ ແຕ່ມາເປັນພະຍານກ່ຽວເລື່ອງຄວາມສະຫວ່າງນັ້ນ. 9ອັນນີ້ຄືຄວາມສະ-
ຫວ່າງອັນແທ້ຈິງ ທີ່ຂະນະນັ້ນກຳລັງເຂົ້າມາໃນໂລກ ແລະສ່ອງເຖິງຄົນທັງປວງ. 10ພຣະອົງຊົງ
ສະຖິດຢູ່ໃນໂລກ ຊຶ່ງ ພຣະເຈົ້າ ຊົງສ້າງຂຶ້ນດ້ວຍພຣະອົງນັ້ນ ແຕ່ໂລກບໍ່ໄດ້ຮູ້ຈັກພຣະອົງ.
11ພຣະອົງໄດ້ສະເດັດມາຍັງບ້ານເມືອງຂອງພຣະອົງ ແລະຊາວບ້ານຊາວເມືອງຂອງພຣະອົງບໍ່
ໄດ້ຕ້ອນຮັບພຣະອົງ. 12ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະ-
ອົງ ພຣະອົງກໍຊົງປະທານສິດໃຫ້ກາຍເປັນບຸດຂອງ ພຣະເຈົ້າ. 13ຊຶ່ງບໍ່ໄດ້ເກີດຈາກເລືອດເນື້ອ
ຫລືກາມ, ຫລືຄວາມປະສົງຂອງມະນຸດ ແຕ່ເກີດຈາກ ພຣະເຈົ້າ.

14ພຣະທຳໄດ້ຊົງບັງເກີດເປັນມະນຸດ ແລະຊົງອາໃສຢູ່ຖ້າມກາງເຮົາທັງຫລາຍບໍລິບູນດ້ວຍ
ພຣະຄຸນແລະຄວາມຈິງ ເຮົາທັງຫລາຍໄດ້ເຫັນສະຫງ່າລາສີຂອງພຣະອົງຄືສະຫງ່າລາສີອັນສົມ
ກັບ ພຣະບຸດ ອົງດຽວຂອງ ພຣະບິດາ. 15ໂຢຮັນ ໄດ້ເປັນພະຍານໃຫ້ແກ່ພຣະອົງ ແລະຮ້ອງປະ-
ກາດວ່າ, "ຜູ້ນີ້ແຫລະ, ຄືຜູ້ທີ່ເຮົາໄດ້ກ່າວເຖິງວ່າ 'ຜູ້ທີ່ມາພາຍຫລັງເຮົາກໍຈະອອກກ່ອນໜ້າເຮົາ
ເພາະທ່ານ ເປັນຢູ່ກ່ອນ ເຮົາ'." 16ແລະ ເຮົາທຸກຄົນ ໄດ້ຮັບ ຈາກຄວາມຄົບບໍລິບູນຂອງພຣະອົງ
ເປັນພຣະຄຸນຊ້ອນພຣະຄຸນ. 17ເພາະວ່າ ພຣະເຈົ້າ ໄດ້ຊົງປະທານພຣະບັນຍັດນັ້ນດ້ວຍ ໂມເຊ
ສ່ວນພຣະຄຸນ ແລະຄວາມຈິງມາດ້ວຍ ພຣະເຢຊູຄຣິດ. 18ບໍ່ມີໃຜໄດ້ເຫັນ ພຣະເຈົ້າ ຈັກເທື່ອ ແຕ່
ພຣະບຸດອົງດຽວ ຜູ້ຊົງເປັນ ພຣະເຈົ້າຊຶ່ງຊົງສະຖິດຢູ່ໃນພຣະຊວງຂອງ ພຣະບິດາ ພຣະອົງນັ້ນ
ແຫລະ, ໄດ້ຊົງສະແດງໃຫ້ຮູ້.

## ຄຳພະຍານຂອງໂຢຮັນບັບຕິສະໂຕ

*(ມທ 3:1-12; ມຣກ 1:7-8; ລກ 3:15-17)*

19ນີ້ເປັນຄຳພະຍານຂອງ ໂຢຮັນ ຄືເມື່ອພວກຢິວ ໄດ້ໃຊ້ພວກປະໂລຫິດແລະພວກ ເລວີ ຈາກ
ກຸງ ເຢຣູຊາເລັມ ໄປຖາມທ່ານວ່າ, “ທ່ານຄືຜູ້ໃດ.” 20ທ່ານກໍຍອມບໍ່ໄດ້ປະຕິເສດ ຄືໄດ້ຍອມຮັບ
ວ່າ, “ເຮົາບໍ່ແມ່ນ ພຣະຄຣິດ.” 21ເຂົາຈຶ່ງຖາມວ່າ, “ຖ້າຢ່າງນັ້ນທ່ານຄືຜູ້ໃດ ທ່ານແມ່ນ ເອລີຢາ
ຫລື” ທ່ານຕອບວ່າ, “ເຮົາບໍ່ແມ່ນ ເອລີຢາ” “ທ່ານຄືຜູ້ປະກາດພຣະທຳຫລື” ທ່ານຕອບວ່າ, “ບໍ່
ແມ່ນ.” 22ເຂົາຈຶ່ງຖາມອີກວ່າ, “ທ່ານຄືໃຜ ເພື່ອເຮົາຈະໄດ້ເອົາຄຳຕອບໄປບອກຄົນທີ່ໄດ້ໃຊ້ເຮົາ
ມານັ້ນ ຝ່າຍທ່ານ, ທ່ານເວົ້າຢ່າງໃດ.”

23ທ່ານຕອບວ່າ, “ຝ່າຍເຮົາເປັນສຽງຂອງຜູ້ທີ່ຮ້ອງປະກາດໃນປ່າວ່າ, ‘ຈົ່ງເຮັດຫົນທາງຂອງ
ອົງ ພຣະຜູ້ເປັນເຈົ້າ ໃຫ້ຊື່ໄປ’”ຕາມທີ່ ເອຊາຢາ ຜູ້ປະກາດພຣະທຳໄດ້ກ່າວໄວ້. 24ຝ່າຍພວກທີ່ຮັບ
ໃຊ້ມານັ້ນ ແມ່ນ ແຕ່ພັກພວກ ຟາຣີຊາຍ. 25ເຂົາຈຶ່ງຖາມ ໂຢຮັນ ວ່າ, “ຖ້າທ່ານບໍ່ແມ່ນ ພຣະຄຣິດ,
ບໍ່ແມ່ນ ເອລີຢາ ຫລືບໍ່ແມ່ນຜູ້ປະກາດພຣະທຳນັ້ນ ເປັນຫຍັງທ່ານຈຶ່ງໃຫ້ຮັບບັບຕິສະມາ.”

26ໂຢຮັນ ໄດ້ຕອບເຂົາວ່າ, “ຝ່າຍເຮົານີ້ໃຫ້ຮັບບັບຕິສະມາດ້ວຍນ້ຳ ແຕ່ມີຜູ້ໜຶ່ງທີ່ຢືນຢູ່ຖ້າມ-
ກາງພວກທ່ານ ຊຶ່ງພວກທ່ານບໍ່ຮູ້ຈັກ. 27ຜູ້ນັ້ນແຫລະ, ມາພາຍຫລັງເຮົາ ເຖິງແມ່ນແຕ່ສາຍຮັດ
ເກີບຂອງທ່ານ ເຮົາກໍບໍ່ສົມຄວນຈະແກ້.” 28ເຫດການເຫລົ່ານີ້ໄດ້ບັງເກີດຂຶ້ນທີ່ບ້ານ ເບັດທານີ
ຟາກແມ່ນ້ຳຢໍແດນທາງທິດຕາເວັນອອກ ເປັນບ່ອນທີ່ໂຢຮັນກຳລັງໃຫ້ຮັບບັບຕິສະມາຢູ່.

## ພຣະເມສານ້ອຍຂອງພຣະເຈົ້າ

29ລ່ວງໄປວັນໜຶ່ງ ໂຢຮັນ ໄດ້ເຫັນ ພຣະເຢຊູ ກຳລັງສະເດັດມາຫາ ທ່ານຈຶ່ງກ່າວວ່າ, “ເບິ່ງແມ,
ພຣະເມສານ້ອຍຂອງ ພຣະເຈົ້າ ຜູ້ຊົງຮັບເອົາຄວາມຜິດບາບຂອງມະນຸດສະໂລກໄປເສຍ. 30ຜູ້ນີ້
ແຫລະ, ທີ່ເຮົາກ່າວວ່າຈະມີຜູ້ໜຶ່ງມາພາຍຫລັງເຮົາ, ຈະອອກກ່ອນໜ້າເຮົາເພາະວ່າທ່ານເປັນຢູ່
ກ່ອນເຮົາ. 31ເຮົາເອງກໍບໍ່ໄດ້ຮູ້ຈັກທ່ານ ແຕ່ເພື່ອໃຫ້ທ່ານເປັນທີ່ປະກົດແຈ້ງແກ່ພວກອິສຣາເອນ
ເຮົາຈຶ່ງໄດ້ໃຫ້ຮັບບັບຕິສະມາໃນນ້ຳ.”

32ແລະ ໂຢຮັນ ກ່າວເປັນພະຍານວ່າ, “ເຮົາໄດ້ເຫັນ ພຣະວິນຍານ ເໝືອນດັ່ງນົກເຂົາສະເດັດ
ລົງມາຈາກຟ້າສະຫວັນ ແລະຊົງສະຖິດຢູ່ເທິງທ່ານ. 33ເຮົາເອງບໍ່ໄດ້ຮູ້ຈັກທ່ານ ແຕ່ພຣະອົງຜູ້
ຊົງໃຊ້ເຮົາມາໃຫ້ຮັບບັບຕິສະມາດ້ວຍນ້ຳນັ້ນ ໄດ້ຊົງກ່າວກັບເຮົາວ່າ, ເຈົ້າຈະເຫັນ ພຣະວິນຍານ
ລົງມາສະຖິດຢູ່ເທິງຜູ້ໃດ ຜູ້ນັ້ນແຫລະ, ເປັນຜູ້ໃຫ້ຮັບບັບຕິສະມາດ້ວຍ ພຣະວິນຍານບໍລິສຸດ.
34ແລະເຮົາໄດ້ເຫັນແລ້ວຈຶ່ງເປັນພະຍານວ່າ ທ່ານຜູ້ນີ້ແຫລະ, ເປັນ ພຣະບຸດ ຂອງ ພຣະເຈົ້າ.”

## ສາວົກພວດທຳອິດ

35ລ່ວງໄປອີກວັນໜຶ່ງ ໂຢຮັນ ກຳລັງຢືນຢູ່ກັບລູກສິດຂອງຕົນສອງຄົນ. 36ແລະທ່ານໄດ້ເພ່ງ
ເບິ່ງ ພຣະເຢຊູ ກຳລັງສະເດັດກາຍໄປ ຈຶ່ງກ່າວວ່າ, ເບິ່ງແມ, ພຣະເມສານ້ອຍຂອງ ພຣະເຈົ້າ.”
37ລູກສິດສອງຄົນໄດ້ຍິນ ໂຢຮັນ ເວົ້າດັ່ງນັ້ນ ເຂົາຈຶ່ງຕິດຕາມ ພຣະເຢຊູ ໄປ. 38ຝ່າຍ ພຣະເຢຊູ ຊົງ
ຫລຽວຫລັງເຫັນເຂົາທັງສອງຕິດຕາມມາ ຈຶ່ງຊົງຖາມເຂົາວ່າ, “ພວກທ່ານຊອກຫາຫຍັງ” ເຂົາ
ທູນພຣະອົງວ່າ, “ຮັບບີ (ຊຶ່ງແປວ່າ ອາຈານ) ທ່ານອາໃສຢູ່ທີ່ໃດ.” 39ພຣະອົງຊົງຕອບເຂົາວ່າ,

“ຈົ່ງມາເບິ່ງ” ເຂົາກໍໄປແລະເຫັນບ່ອນຊຶ່ງພຣະອົງຊົງອາໃສ ວັນນັ້ນເຂົາກໍໄດ້ພັກຢູ່ກັບພຣະອົງ
ເພາະເປັນເວລາປະມານສີ່ໂມງແລງແລ້ວ.
40ໃນສອງຄົນທີ່ໄດ້ຍິນ ໂຢຮັນ ເວົ້າ ແລະ ຕິດຕາມ ພຣະເຢຊູ ໄປນັ້ນ ຜູ້ໜຶ່ງຄື ອັນເດອາ ນ້ອງ
ຊາຍຂອງ ຊີໂມນ ເປໂຕ. 41ອັນເດອາກໍໄປຫາຊີໂມນ ອ້າຍຂອງຕົນກ່ອນແລະໄດ້ບອກວ່າ, “ໝູ່
ເຮົາໄດ້ພົບ ເມຊີອາ ແລ້ວ” (ທີ່ແປວ່າ ພຣະຄຣິດ). 42ອັນເດອາ ຈຶ່ງພາຊີໂມນ ໄປເຝົ້າ ພຣະເຢຊູ
ເມື່ອຊົງທອດພຣະເນດແລ້ວພຣະອົງຈຶ່ງຊົງກ່າວວ່າ, “ທ່ານຄືຊີໂມນ ລູກຂອງ ໂຢຮັນ ທ່ານຈະໄດ້
ຊື່ໃໝ່ວ່າ ເກຟາ” (ທີ່ແປວ່າ ເປໂຕ ຄືຫີນ).

## ຊົງເອີ້ນເອົາຟີລິບແລະນະທານາເອັນ

43ລ່ວງໄປວັນໜຶ່ງ ພຣະເຢຊູຊົງຕັ້ງພຣະໄທຈະສະເດັດໄປແຂວງຄາລີເລ ພຣະອົງຊົງພົບຟີ-
ລິບ ຈຶ່ງຊົງກ່າວວ່າ, “ຈົ່ງຕາມເຮົາມາ”. 44ຟີລິບ ມາຈາກ ເບັດຊາອີດາ ເມືອງຂອງ ອັນເດອາ ແລະ
ເປໂຕ. 45ຟີລິບ ໄດ້ໄປຫາ ນະທານາເອັນ ບອກວ່າ, “ເຮົາໄດ້ພົບຜູ້ທີ່ ໂມເຊ ໄດ້ກ່າວເຖິງ ໃນໜັງສື
ພຣະບັນຍັດ ແລະທີ່ພວກຜູ້ປະກາດພຣະທຳໄດ້ກ່າວເຖິງ ເໝືອນກັນ ຄື ເຢຊູ ລູກຂອງ ໂຢເຊັບ
ໄທ ນາຊາເຣັດ.” 46ນະທານາເອັນ ຖາມ ຟີລິບ ວ່າ, “ສິ່ງດີອັນໃດຈະມາຈາກ ນາຊາເຣັດ ໄດ້ຫລື”
ຟີລິບ ຕອບວ່າ, “ມາເບິ່ງເອົາ.”
47ພຣະເຢຊູ ຊົງເຫັນ ນະທານາເອັນ ມາຫາພຣະອົງ ກໍຊົງກ່າວເຖິງເລື່ອງຂອງທ່ານວ່າ, “ເບິ່ງ
ແມ, ຜູ້ນີ້ຄືຊົນຊາດ ອິສຣາເອນ ແທ້ ໃນຕົວທ່ານບໍ່ມີອຸບາຍ.” 48ນະທານາເອັນ ໄດ້ທູນຖາມພຣະ-
ອົງວ່າ, “ທ່ານຮູ້ຈັກຂ້ານ້ອຍໄດ້ຢ່າງໃດ” ພຣະເຢຊູ ຊົງຕອບວ່າ, “ເຮົາໄດ້ເຫັນທ່ານແລ້ວເມື່ອ
ທ່ານຢູ່ໃຕ້ຕົ້ນເດື່ອເທດ ກ່ອນທີ່ ຟີລິບ ໄດ້ເອີ້ນທ່ານນັ້ນ.” 49ນະທານາເອັນ ທູນຕອບພຣະອົງວ່າ,
“ພຣະອາຈານເອີຍ, ທ່ານເປັນ ພຣະບຸດ ຂອງ ພຣະເຈົ້າ ທ່ານເປັນກະສັດຂອງຊາດ ອິສຣາເອນ.”
50ພຣະເຢຊູ ຊົງຕອບວ່າ, “ທ່ານເຊື່ອເຮົາ ເພາະເຮົາໄດ້ບອກວ່າເຮົາໄດ້ເຫັນທ່ານຢູ່ໃຕ້ຕົ້ນເດື່ອ
ນັ້ນຫລື ທ່ານຍັງຈະເຫັນ ເຫດການ ໃຫຍ່ກວ່ານັ້ນອີກ.” 51ພຣະອົງຊົງກ່າວ ແກ່ທ່ານວ່າ, “ເຮົາ
ບອກຕາມຄວາມຈິງແກ່ທ່ານທັງຫລາຍວ່າ ພວກທ່ານຈະໄດ້ເຫັນທ້ອງຟ້າແຫວກອອກ ແລະບັນ-
ດາເທວະດາຂອງ ພຣະເຈົ້າ ຂຶ້ນແລະລົງຢູ່ເທິງບຸດມະນຸດ.”

# ບົດທີ 2

## ງານສົມລົດທີ່ບ້ານການາ

1ວັນຖ້ວນສາມມີງານພິທີສົມລົດທີ່ບ້ານ ການາ ແຂວງ ຄາລີເລ ແລະມານດາຂອງ ພຣະເຢຊູ
ກໍຢູ່ຫັ້ນ. 2ພຣະເຢຊູກັບພວກສາວົກໄດ້ຮັບເຊີນໄປໃນງານນັ້ນເໝືອນກັນ. 3ເມື່ອເຫລົ້າແວງໝົດ
ແລ້ວ ມານດາຂອງ ພຣະເຢຊູ ຈຶ່ງທູນພຣະອົງວ່າ, “ເຫລົ້າແວງເຂົາບໍ່ມີແລ້ວ.” 4ພຣະເຢຊູ ຊົງ
ຕອບມານດາວ່າ, “ນາງເອີຍ, ປະໃຫ້ເປັນທຸລະຂອງເຮົາເສຍ ເພາະເວລາຂອງເຮົາຍັງບໍ່ທັນມາ
ເຖິງ.” 5ມານດາຂອງພຣະອົງຈຶ່ງບອກຕໍ່ຄົນໃຊ້ວ່າ, “ເມື່ອເພິ່ນບອກພວກເຈົ້າໃຫ້ເຮັດອັນໃດ ຈົ່ງ
ເຮັດຕາມເນີ.”
6ທີ່ນັ້ນມີອ່າງຫີນຫົກໜ່ວຍຕັ້ງຢູ່ ເພື່ອໃຊ້ຊຳລະລ້າງຕາມທຳນຽມຂອງພວກຢິວ ອ່າງໜ່ວຍ

ໃດກໍໃສ່ນ້ຳໄດ້ສີ່ຫລືຫ້າກະໂລ່ງ. 7ພຣະເຢຊູຊົງບອກຕໍ່ເຂົາວ່າ, “ຈົ່ງຕັກນ້ຳໃສ່ອ່າງໃຫ້ເຕັມ”
ແລະເຂົາໄດ້ຕັກນ້ຳໃສ່ອ່າງເຫລົ່ານັ້ນເຕັມພຽງປາກ. 8ແລ້ວພຣະອົງຊົງບອກເຂົາວ່າ, “ບັດນີ້ຈົ່ງ
ຕັກສົ່ງໄປໃຫ້ພະນັກງານເນີ” ເຂົາກໍຕັກສົ່ງໃຫ້. 9ເມື່ອພະນັກງານຊີມນ້ຳທີ່ກາຍເປັນເຫລົ້າແວງ
ນັ້ນແລ້ວ ແລະບໍ່ຮູ້ວ່າມາແຕ່ໃສ (ແຕ່ຄົນໃຊ້ທີ່ຕັກນ້ຳກໍຮູ້) ພະນັກງານຈຶ່ງເອີ້ນເຈົ້າບ່າວມາ.
10ແລະກ່າວວ່າ, “ທຸກຄົນເຄີຍເອົາເຫລົ້າແວງອັນດີມາໃຫ້ກ່ອນ ແລະເມື່ອເຂົາດື່ມຫລາຍແລ້ວຈຶ່ງ
ເອົາອັນບໍ່ດີມາ ແຕ່ຝ່າຍທ່ານໄດ້ກັກເຫລົ້າແວງອັນດີໄວ້ຈົນເຖິງບັດນີ້.” 11ການໝາຍສຳຄັນເທື່ອ
ຕົ້ນນີ້ ພຣະເຢຊູຊົງເຮັດທີ່ບ້ານການາ ແຂວງຄາລີເລ ພຣະອົງໄດ້ຊົງສະແດງສະຫງ່າລາສີຂອງ
ພຣະອົງໃຫ້ປະກົດ ຝ່າຍພວກສາວົກກໍໄດ້ເຊື່ອໃນພຣະອົງ.
12ພາຍຫລັງນັ້ນມາພຣະອົງໄດ້ສະເດັດລົງໄປຍັງເມືອງກາເປນາອູມ ກັບມານດາພ້ອມທັງ
ພວກນ້ອງຊາຍ ແລະສາວົກຂອງພຣະອົງ ກໍຊົງອາໃສຢູ່ທີ່ນັ້ນບໍ່ຫລາຍວັນ.

## ຊົງຊຳລະພຣະວິຫານ

*(ມທ 21:12-13; ມຣກ 11:15-18; ລກ 19:45-46)*

13ແລະເທດສະການປັດສະຄາຂອງພວກຢິວໃກ້ເຂົ້າມາແລ້ວ ພຣະເຢຊູສະເດັດຂຶ້ນເມືອຍັງ
ກຸງເຢຣູຊາເລັມ.
14ຢູ່ໃນບໍລິເວນພຣະວິຫານພຣະອົງໄດ້ພົບຄົນຂາຍງົວ, ຂາຍແກະ, ແລະຂາຍນົກເຂົາ ກັບ
ທັງພວກຄົນແລກເງິນທີ່ນັ່ງຢູ່ທັ້ນ. 15ພຣະອົງຊົງເອົາເຊືອກເຮັດແສ້ ໄລ່ຄົນເຫລົ່ານັ້ນພ້ອມກັບ
ແກະແລະງົວອອກໄປຈາກບໍລິເວນພຣະວິຫານ ຊົງຖອກເງິນແລະຂວ້ຳໂຕະຂອງຄົນແລກເງິນ.
16ແລ້ວພຣະອົງຊົງກ່າວແກ່ບັນດາຄົນທີ່ຂາຍນົກເຂົາວ່າ, “ຈົ່ງເອົາຂອງເຫລົ່ານີ້ອອກໄປເສຍ ຢ່າ
ເຮັດໃຫ້ທີ່ສະຖິດພຣະບິດາຂອງເຮົາເປັນບ່ອນຄ້າຂາຍ.” 17ພວກສາວົກຂອງພຣະອົງໄດ້ລະນຶກ
ເຖິງຄຳທີ່ຂຽນໄວ້ວ່າ, “ຄວາມຮ້ອນໃຈສຳລັບພຣະວິຫານຂອງພຣະອົງກໍໄໝ້ຢູ່ພາຍໃນຂ້າພຣະ-
ອົງເສຍ.”
18ພວກຢິວຈຶ່ງທູນພຣະອົງວ່າ, “ເຈົ້າຈະສະແດງການສຳຄັນອັນໃດໃຫ້ພວກເຮົາເຫັນວ່າ ເຈົ້າ
ມີສິດເຮັດການຢ່າງນີ້.” 19ພຣະເຢຊູຊົງຕອບເຂົາວ່າ, “ຖ້າມ້າງວິຫານນີ້ລົງເສຍ ເຮົາຈະສ້າງຂຶ້ນ
ໃໝ່ໃນສາມວັນ.” 20ພວກຢິວຈຶ່ງທູນວ່າ, “ພຣະວິຫານນີ້ເຂົາໄດ້ສ້າງຂຶ້ນເຖິງສີ່ສິບຫົກປີຈຶ່ງສຳ-
ເລັດ ຝ່າຍເຈົ້າຈະສ້າງຂຶ້ນໃໝ່ໃນສາມວັນຫລື.” 21ແຕ່ພຣະວິຫານທີ່ພຣະອົງຊົງກ່າວເຖິງນັ້ນ ຄື
ພຣະກາຍຂອງພຣະອົງ. 22ເຫດສັນນັ້ນເມື່ອພຣະອົງຖືກຊົງບັນດານໃຫ້ເປັນຄືນມາແລ້ວ ພວກ
ສາວົກກໍລະນຶກໄດ້ວ່າ ພຣະອົງຊົງກ່າວດັ່ງນີ້ ແລະເຂົາກໍເຊື່ອພຣະຄຳພີກັບທັງພຣະທຳທີ່ພຣະ-
ເຢຊູໄດ້ຊົງກ່າວແລ້ວນັ້ນ.

## ພຣະເຢຊູຊົງຮູ້ຈັກມະນຸດທຸກຄົນ

23ເມື່ອພຣະອົງປະທັບຢູ່ໃນກຸງເຢຣູຊາເລັມເວລາເທດສະການປັດສະຄານັ້ນ ມີຫລາຍຄົນໄດ້
ເຊື່ອໃນພຣະນາມຂອງພຣະອົງ ເພາະເຂົາໄດ້ເຫັນການສຳຄັນທີ່ພຣະອົງໄດ້ຊົງກະທຳຂຶ້ນ.
24ແຕ່ພຣະເຢຊູບໍ່ໄດ້ຊົງວາງພຣະໄທໃນຄົນເຫລົ່ານັ້ນ ເພາະພຣະອົງຊົງຮູ້ຈັກມະນຸດທຸກຄົນ
ແລ້ວ. 25ແລະພຣະອົງບໍ່ຊົງມີຄວາມຈຳເປັນທີ່ຈະມີພະຍານໃນເລື່ອງມະນຸດ ດ້ວຍພຣະອົງເອງ

ຊົງຊາບວ່າ ອັນໃດມີຢູ່ໃນມະນຸດ.

# ບົດທີ 3

## ພຣະເຢຊູກັບນີໂກເດມ

1ມີຊາຍຄົນໜຶ່ງໃນພວກຟາຣີຊາຍຊື່ນີໂກເດມ ເປັນເຈົ້ານາຍຂອງພວກຢິວ. 2ຜູ້ນີ້ໄດ້ມາຫາ
ພຣະເຢຊູໃນເວລາກາງຄືນທູນພຣະອົງວ່າ, "ອາຈານເອີຍ, ພວກຂ້ານ້ອຍຊາບຢູ່ວ່າທ່ານເປັນຄູ
ທີ່ມາຈາກພຣະເຈົ້າ ເພາະບໍ່ມີຜູ້ໃດອາດເຮັດໝາຍສຳຄັນທີ່ທ່ານເຮັດຢູ່ນັ້ນ ເວັ້ນແຕ່ພຣະເຈົ້າຊົງ
ສະຖິດຢູ່ນຳ." 3ພຣະເຢຊູຊົງຕອບວ່າ, "ເຮົາບອກທ່ານຕາມຄວາມຈິງວ່າຖ້າຜູ້ໃດບໍ່ບັງເກີດມາ
ໃໝ່ ຜູ້ນັ້ນຈະເຫັນລາຊະແຜ່ນດິນຂອງພຣະເຈົ້າບໍ່ໄດ້." 4ນີໂກເດມທູນພຣະອົງວ່າ, "ຄົນເຖົ້າ
ແລ້ວຈະບັງເກີດໄດ້ຢ່າງໃດ ຈະເຂົ້າໃນທ້ອງແມ່ຂອງຕົນເທື່ອທີ່ສອງແລ້ວເກີດມາໄດ້ຫລື."

5ພຣະເຢຊູຊົງຕອບວ່າ, "ເຮົາບອກທ່ານຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດມາຈາກນ້ຳ
ແລະຈາກພຣະວິນຍານ ຜູ້ນັ້ນຈະເຂົ້າໃນລາຊະແຜ່ນດິນຂອງພຣະເຈົ້າບໍ່ໄດ້. 6ຊຶ່ງບັງເກີດຈາກ
ເນື້ອກາຍກໍເປັນເນື້ອກາຍ ແລະຊຶ່ງບັງເກີດຈາກພຣະວິນຍານກໍເປັນວິນຍານ. 7ຢ່າປະຫລາດໃຈ
ທີ່ເຮົາບອກທ່ານວ່າ ທ່ານທັງຫລາຍຈຳເປັນຕ້ອງບັງເກີດມາໃໝ່. 8ລົມຢາກພັດໄປທິດໃດກໍພັດ
ໄປທິດນັ້ນ ແລະທ່ານໄດ້ຍິນສຽງມັນ ແຕ່ທ່ານບໍ່ຮູ້ວ່າມັນມາແຕ່ໃສຫລືໄປໃສ ທຸກຄົນທີ່ບັງເກີດ
ຈາກພຣະວິນຍານກໍເປັນດັ່ງນັ້ນແຫລະ."

9ນີໂກເດມທູນພຣະອົງວ່າ, "ເຫດການເຫລົ່ານີ້ຈະບັງເກີດຂຶ້ນໄດ້ຢ່າງໃດ." 10ພຣະເຢຊູຊົງ
ຕອບວ່າ, "ທ່ານເປັນອາຈານຂອງພວກອິສຣາເອນ ແລະຍັງບໍ່ຮູ້ຈັກສິ່ງເຫລົ່ານີ້ຫລື. 11ເຮົາບອກ
ຄວາມຈິງແກ່ທ່ານວ່າ ພວກເຮົາເວົ້າສິ່ງທີ່ເຮົາຮູ້ແລະເປັນພະຍານເຖິງສິ່ງທີ່ພວກເຮົາໄດ້ເຫັນ ແຕ່
ທ່ານທັງຫລາຍບໍ່ໄດ້ຮັບຄຳພະຍານຂອງເຮົາ 12ຖ້າເຮົາບອກທ່ານທັງຫລາຍເຖິງສິ່ງຝ່າຍໂລກ
ແລະທ່ານບໍ່ເຊື່ອ ຖ້າເຮົາບອກທ່ານເຖິງສິ່ງຝ່າຍສະຫວັນ ພວກທ່ານຈະເຊື່ອໄດ້ຢ່າງໃດ. 13ບໍ່ມີ
ຜູ້ໃດໄດ້ຂຶ້ນໄປສູ່ສະຫວັນ ນອກຈາກຜູ້ທີ່ລົງມາຈາກສະຫວັນຄືບຸດມະນຸດ." 14ໂມເຊໄດ້ຍົກງູຂຶ້ນ
ໃນປ່າສັນໃດ ບຸດມະນຸດຈະຕ້ອງຖືກຍົກຂຶ້ນສັນນັ້ນ, 15ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະອົງຈະ
ມີຊີວິດອັນຕະຫລອດໄປເປັນນິດ.

16ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນ
ທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕະຫລອດໄປເປັນນິດ. 17ເພາະວ່າ
ພຣະເຈົ້າໄດ້ຊົງໃຊ້ພຣະບຸດຂອງພຣະອົງເຂົ້າມາໃນໂລກ ບໍ່ແມ່ນຈະຕັດສິນລົງໂທດມະນຸດສະ-
ໂລກ ແຕ່ເພື່ອມະນຸດສະໂລກຈະພົ້ນໄດ້ດ້ວຍພຣະບຸດນັ້ນ. 18ຜູ້ທີ່ວາງໃຈໃນພຣະບຸດກໍບໍ່ຖືກ
ຕັດສິນໂທດ ແຕ່ຜູ້ທີ່ບໍ່ວາງໃຈກໍໄດ້ຖືກຕັດສິນລົງໂທດແລ້ວ ເພາະບໍ່ໄດ້ເຊື່ອໃນພຣະນາມພຣະ-
ບຸດອົງດຽວຂອງພຣະເຈົ້າ. 19ນີ້ແຫລະ, ແມ່ນການຕັດສິນລົງໂທດ ຄືວ່າຄວາມສະຫວ່າງໄດ້
ເຂົ້າມາໃນໂລກ ແຕ່ມະນຸດໄດ້ຮັກຄວາມມືດຫລາຍກວ່າຮັກຄວາມສະຫວ່າງ ເພາະກິດຈະການ
ຂອງເຂົາຊົ່ວ. 20ດ້ວຍວ່າທຸກຄົນທີ່ເຮັດຊົ່ວກໍຊັງຄວາມສະຫວ່າງ ແລະບໍ່ມາເຖິງຄວາມສະຫວ່າງ
ເພາະຢ້ານວ່າ ການເຮັດຂອງຕົນຈະເປີດເຜີຍ. 21ແຕ່ບຸກຄົນທີ່ເຮັດຕາມຄວາມຈິງກໍມາຫາຄວາມ

ສະຫວ່າງ ເພື່ອໃຫ້ການຂອງຕົນປະກົດວ່າໄດ້ເຮັດດ້ວຍອາໃສ ພຣະເຈົ້າ.

## ພຣະເຢຊູກັບໂຢຮັນບັບຕິສະໂຕ

22ຫລັງຈາກນັ້ນ ພຣະເຢຊູ ໄດ້ສະເດັດໄປຍັງ ແຂວງ ຢູດາຍ ພ້ອມກັບພວກສາວົກຂອງພຣະອົງ
ແລະປະທັບຢູ່ກັບເຂົາທີ່ນັ້ນ ແລ້ວຊົງໃຫ້ຮັບບັບຕິສະມາ. 23ຝ່າຍ ໂຢຮັນ ກໍໃຫ້ຮັບບັບຕິສະມາຢູ່
ບ້ານ ໄອໂນນ ໃກ້ບ້ານ ຊາລາອີມ ເໝືອນກັນ ເພາະທີ່ນັ້ນມີນ້ຳຫລາຍ ແລະຝູງຄົນກໍພາກັນມາຮັບ
ບັບຕິສະມາ. 24ດ້ວຍວ່າເວລານັ້ນ ໂຢຮັນ ຍັງບໍ່ທັນໄດ້ຕິດຄຸກ.

25ເກີດການໂຕ້ຖຽງກັນຂຶ້ນລະຫວ່າງລູກສິດຂອງ ໂຢຮັນ ກັບ ຢິວ ຄົນໜຶ່ງ ເລື່ອງການຊຳລະ
ລ້າງ. 26ລູກສິດນັ້ນຈຶ່ງໄປຫາ ໂຢຮັນ ແລະເວົ້າວ່າ, “ອາຈານເອີຍ, ຜູ້ທີ່ຢູ່ນຳອາຈານທີ່ຟາກແມ່ນ້ຳ
ຢໍແດນ ພຸ້ນ ຄືຜູ້ທີ່ອາຈານເປັນພະຍານເຖິງນັ້ນ ເບິ່ງແມ, ຜູ້ນັ້ນກຳລັງໃຫ້ຮັບບັບຕິສະມາ ແລະ
ຄົນທັງປວງກໍພາກັນໄປຫາເພິ່ນ.”

27ໂຢຮັນ ຕອບວ່າ, “ມະນຸດຈະຮັບສິ່ງໃດບໍ່ໄດ້ ເວັ້ນໄວ້ແຕ່ທີ່ຊົງໂຜດປະທານຈາກສະຫວັນໃຫ້
ເຂົາ. 28ທ່ານທັງຫລາຍກໍເປັນພະຍານຝ່າຍເຮົາວ່າເຮົາໄດ້ກ່າວແລ້ວວ່າ ‘ເຮົາບໍ່ເປັນ ພຣະຄຣິດ
ແຕ່ເປັນຜູ້ຮັບໃຊ້ມາກ່ອນໜ້າພຣະອົງ.’ 29ຜູ້ທີ່ມີເຈົ້າສາວກໍແມ່ນເຈົ້າບ່າວນັ້ນແຫລະ ແຕ່ສະຫາຍ
ຂອງເຈົ້າບ່າວທີ່ຢືນຟັງເຈົ້າບ່າວຢູ່ ກໍມີຄວາມຍິນດີຫລາຍເພາະໄດ້ຍິນສຽງຂອງເຈົ້າບ່າວນັ້ນ
ຢ່າງນັ້ນແຫລະ, ຄວາມຍິນດີຂອງເຮົາກໍຄົບຖ້ວນແລ້ວ. 30ພຣະອົງນັ້ນຕ້ອງຊົງໃຫຍ່ຂຶ້ນ ແຕ່ເຮົາ
ຈະຕ້ອງນ້ອຍລົງ.”

## ຜູ້ທີ່ສະເດັດມາຈາກສະຫວັນ

31ພຣະອົງຜູ້ສະເດັດມາຈາກທາງເທິງຊົງຢູ່ເໜືອທຸກສິ່ງ ຜູ້ທີ່ເປັນແຕ່ແຜ່ນດິນໂລກກໍເປັນຝ່າຍ
ໂລກ ແລະຍ່ອມກ່າວຝ່າຍໂລກ ພຣະອົງຜູ້ສະເດັດຈາກສະຫວັນຊົງຢູ່ເໜືອທຸກສິ່ງ. 32ສິ່ງທີ່
ພຣະອົງໄດ້ຊົງເຫັນແລະໄດ້ຍິນ ພຣະອົງກໍຊົງເປັນພະຍານຕໍ່ສິ່ງນັ້ນ ແຕ່ບໍ່ມີຜູ້ໃດໄດ້ຮັບຄຳພະ-
ຍານຂອງພຣະອົງ. 33ຜູ້ທີ່ຮັບຄຳພະຍານຂອງພຣະອົງກໍປະທັບຕາລົງວ່າ ພຣະເຈົ້າ ຊົງສັດຈິງ.
34ເພາະພຣະອົງຜູ້ທີ່ ພຣະເຈົ້າ ຊົງໃຊ້ມານັ້ນຊົງກ່າວພຣະທຳຂອງ ພຣະເຈົ້າ ເພາະ ພຣະເຈົ້າບໍ່ໄດ້
ປະທານ ພຣະວິນຍານ ໃຫ້ໂດຍຈຳກັດ. 35ພຣະບິດາ ຊົງຮັກ ພຣະບຸດ ແລະຊົງມອບທຸກສິ່ງໄວ້
ໃນພຣະຫັດຂອງພຣະອົງ. 36ຜູ້ທີ່ວາງໃຈໃນ ພຣະບຸດ ກໍມີຊີວິດອັນຕະຫລອດໄປເປັນນິດ ຜູ້ທີ່ບໍ່
ເຊື່ອຟັງ ພຣະບຸດ ກໍຈະບໍ່ໄດ້ເຫັນຊີວິດ ແຕ່ພຣະພິໂລດຂອງ ພຣະເຈົ້າ ປົກຄຸມຢູ່ເທິງຜູ້ນັ້ນ.

# ບົດທີ 4

## ພຣະເຢຊູກັບຍິງຊາວຊາມາເຣຍ

1ເມື່ອ ພຣະເຢຊູ ຊົງຊາບວ່າ ພວກ ຟາຣີຊາຍ ໄດ້ຍິນຂ່າວວ່າ ພຣະອົງຊົງມີສາວົກແລະຊົງໃຫ້
ບັບຕິສະມາຫລາຍກວ່າ ໂຢຮັນ, 2(ຄວາມຈິງ ພຣະເຢຊູ ບໍ່ໄດ້ຊົງໃຫ້ບັບຕິສະມາເອງ ແຕ່ພວກສາ-
ວົກຂອງພຣະອົງ ເປັນຜູ້ໃຫ້), 3ພຣະອົງ ຈຶ່ງສະເດັດອອກຈາກ ແຂວງ ຢູດາຍ ແລະກັບໄປຍັງ
ແຂວງ ຄາລິເລ ອີກ.

4ແລະພຣະອົງຕ້ອງສະເດັດຜ່ານ ແຂວງ ຊາມາເຣຍ ໄປ. 5ພຣະອົງ ຈຶ່ງສະເດັດໄປເຖິງ ເມືອງ

ໜຶ່ງຊື່ຊີຂາ ໃນແຂວງຊາມາເຣຍ ໃກ້ທີ່ດິນຊຶ່ງຢາໂຄບ ໃຫ້ແກ່ໂຢເຊັບ ລູກຊາຍຂອງຕົນ. 6ນ້ຳ-
ສ້າງຂອງຢາໂຄບ ກໍຢູ່ທີ່ນັ້ນ ພຣະເຢຊູ ຊົງເດີນທາງເມື່ອຍຈຶ່ງປະທັບລົງແຄມນ້ຳສ້າງເປັນເວລາ
ປະມານທ່ຽງວັນ.

7ມີຍິງຊາວຊາມາເຣຍ ຄົນໜຶ່ງມາຕັກນ້ຳ ພຣະເຢຊູ ຊົງກ່າວກັບນາງວ່າ, "ຂໍໃຫ້ເຮົາກິນນ້ຳ
ແດ່." 8(ຂະນະນັ້ນພວກສາວົກຂອງພຣະອົງເຂົ້າໄປຊື້ອາຫານໃນເມືອງ.) 9ຍິງຊາວຊາມາເຣຍ
ທູນພຣະອົງວ່າ, "ດ້ວຍເຫດໃດທ່ານຜູ້ເປັນຊາດຢິວ ຈຶ່ງຂໍດື່ມນ້ຳນຳຂ້ານ້ອຍຜູ້ເປັນຊາດຊາມາ-
ເຣຍ" (ເພາະພວກຢິວກັບພວກຊາມາເຣຍບໍ່ເຄີຍມີການກ່ຽວຂ້ອງກັນ).

10ພຣະເຢຊູ ຊົງຕອບນາງວ່າ, "ຖ້າເຈົ້າໄດ້ຮູ້ຈັກຂອງທີ່ ພຣະເຈົ້າ ຊົງປະທານ ແລະຮູ້ຈັກຜູ້ທີ່
ກຳລັງເວົ້າກັບເຈົ້າວ່າ 'ຂໍໃຫ້ເຮົາກິນນ້ຳແດ່' ເຈົ້າກໍຄົງຈະຂໍຈາກເພິ່ນ ແລະຜູ້ນັ້ນກໍຄົງຈະໃຫ້ນ້ຳ
ອັນປະກອບດ້ວຍຊີວິດໃຫ້ແກ່ເຈົ້າ." 11ນາງທູນຕອບພຣະອົງວ່າ, "ນາຍເອີຍ, ນາຍບໍ່ມີຫຍັງຕັກ
ແລະນ້ຳສ້າງນີ້ກໍເລິກ ນາຍຈະໄດ້ນ້ຳປະກອບດ້ວຍຊີວິດນັ້ນມາແຕ່ໃສ. 12ນາຍໃຫຍ່ກວ່າຢາ-
ໂຄບບັນພະບຸລຸດຂອງເຮົາ ຜູ້ໄດ້ໃຫ້ນ້ຳສ້າງນີ້ແກ່ເຮົາຫລື ແລະຢາໂຄບ ເອງກໍໄດ້ດື່ມແຕ່ນ້ຳສ້າງ
ນີ້ຮ່ວມທັງລູກຊາຍແລະຝູງສັດຂອງເພິ່ນ."

13ພຣະເຢຊູ ຊົງຕອບນາງວ່າ, "ທຸກຄົນທີ່ກິນນ້ຳນີ້ກໍຍັງຈະຢາກອີກ. 14ແຕ່ຜູ້ທີ່ກິນນ້ຳຊຶ່ງເຮົາ
ຈະປະທານໃຫ້ນັ້ນ ຈະບໍ່ຢາກອີກຕໍ່ໄປຈັກເທື່ອ ນ້ຳຊຶ່ງເຮົາຈະປະທານໃຫ້ນັ້ນຈະກາຍເປັນນ້ຳພຸ
ໃນຕົວຜູ້ນັ້ນ ແລະຈະພຸ່ງຂຶ້ນເຖິງຊີວິດອັນຕະຫລອດໄປເປັນນິດ." 15ນາງທູນພຣະອົງວ່າ, "ນາຍ
ເອີຍ, ຂໍປະທານນ້ຳນັ້ນໃຫ້ຂ້ານ້ອຍ ເພື່ອຂ້ານ້ອຍຈະບໍ່ຢາກ ແລະ ຈະບໍ່ ໄດ້ມາຕັກທີ່ນີ້ອີກ."
16ພຣະເຢຊູ ຊົງບອກນາງວ່າ, "ຈົ່ງໄປເອີ້ນເອົາຜົວຂອງເຈົ້າມາທີ່ນີ້." 17ນາງທູນວ່າ, "ຂ້ານ້ອຍບໍ່
ມີຜົວ" ພຣະເຢຊູ ຊົງກ່າວວ່າ, "ເຈົ້າເວົ້າຖືກແລ້ວວ່າເຈົ້າບໍ່ມີຜົວ. 18ເພາະເຈົ້າມີຜົວຫ້າຄົນແລ້ວ
ແລະຜູ້ທີ່ເຈົ້າມີຢູ່ດຽວນີ້ກໍບໍ່ແມ່ນຜົວຂອງເຈົ້າ ທີ່ເຈົ້າເວົ້ານັ້ນເປັນຄວາມຈິງ."

19ນາງທູນພຣະອົງວ່າ, "ນາຍເອີຍ, ຂ້ານ້ອຍເຫັນຈິງແລ້ວວ່ານາຍເປັນໝໍທຳນວາຍ. 20ບັນ-
ພະບຸລຸດຂອງພວກຂ້ານ້ອຍກໍນະມັດສະການທີ່ພູນີ້ ແຕ່ພວກທ່ານວ່າສະຖານທີ່ທີ່ຄວນນະມັດ-
ສະການ ກໍຄືກຸງ ເຢຣູຊາເລັມ ນັ້ນແຫລະ." 21ພຣະເຢຊູ ຊົງກ່າວກັບນາງວ່າ, "ຍິງເອີຍ, ເຊື່ອເຮົາ
ເທາະ ຄົງມີວັນໜຶ່ງທີ່ພວກເຈົ້າຈະບໍ່ໄດ້ນະມັດສະການທີ່ພູນີ້ ຫລືທີ່ກຸງ ເຢຣູຊາເລັມ. 22ຊຶ່ງພວກ
ເຈົ້ານະມັດສະການນັ້ນ ເຈົ້າບໍ່ຮູ້ຈັກ ແຕ່ຝ່າຍພວກເຮົາ ຊຶ່ງເຮົານະມັດສະການນັ້ນເຮົາກໍຮູ້ຈັກ
ເພາະຄວາມລອດພົ້ນນັ້ນມາຈາກຊາດຢິວ. 23ແຕ່ເວລານັ້ນໃກ້ເຂົ້າມາແລະບັດນີ້ກໍມາເຖິງແລ້ວ
ຄື ເມື່ອ ຜູ້ ທີ່ ນະມັດສະການ ຢ່າງ ຖືກຕ້ອງ ຈະ ນະມັດສະການ ພຣະບິດາ ດ້ວຍ ຈິດ ວິນ ຍານ ແລະ
ຄວາມຈິງ ເພາະວ່າ ພຣະບິດາ ຊົງສະແຫວງຫາຄົນ ແນວນັ້ນນະມັດສະການພຣະອົງ. 24ພຣະ-
ເຈົ້າ ຊົງ ເປັນ ພຣະວິນຍານ ແລະຜູ້ທີ່ນະມັດສະການພຣະອົງຕ້ອງນະມັດສະການດ້ວຍຈິດວິນ
ຍານແລະຄວາມຈິງ." 25ນາງທູນພຣະອົງວ່າ, "ຂ້ານ້ອຍຊາບວ່າພຣະເມຊີອາ (ທີ່ເອີ້ນວ່າພຣະ-
ຄຣິດ) ຈະສະເດັດມາ ເມື່ອພຣະອົງສະເດັດມາແລ້ວພຣະອົງຈະຊົງຊີ້ແຈງທຸກສິ່ງແກ່ພວກຂ້າ-
ນ້ອຍ." 26ພຣະເຢຊູຊົງກ່າວກັບນາງວ່າ, "ເຮົາຜູ້ທີ່ເວົ້າກັບເຈົ້າຢູ່ນີ້ແຫລະ, ຄືທ່ານຜູ້ນັ້ນ."

27ໃນຂະນະນັ້ນພວກສາວົກຂອງພຣະອົງກໍມາເຖິງ ເຂົາກໍປະຫລາດໃຈເພາະພຣະອົງຊົງສົນ-

ທະນາກັບຜູ້ຍິງ ເຖິງປານນັ້ນກໍບໍ່ມີໃຜຖາມວ່າ, "ທ່ານປະສົງອັນໃດ" ຫລື "ເຫດໃດທ່ານຈຶ່ງສົນ-
ທະນາກັບນາງ." 28ຍິງນັ້ນຈຶ່ງປະໜໍ້ນ້ຳຂອງຕົນໄວ້ແລະເຂົ້າໄປໃນເມືອງ ບອກຄົນທັງປວງວ່າ,
29"ຈົ່ງມາເບິ່ງຊາຍຜູ້ໜຶ່ງທີ່ບອກຂ້ອຍເຖິງສິ່ງສາລະພັດທີ່ຂ້ອຍເຮັດມາແລ້ວ ຜູ້ນີ້ບໍ່ແມ່ນພຣະ-
ຄຣິດຫລື." 30ແລະຄົນທັງຫລາຍກໍພາກັນອອກຈາກເມືອງໄປຫາພຣະອົງ.

31ໃນລະຫວ່າງນັ້ນພວກສາວົກທູນພຣະອົງວ່າ, "ອາຈານເຈົ້າຂ້າເອີຍ, ເຊີນຮັບປະທານອາ-
ຫານ." 32ແຕ່ພຣະອົງຊົງຕອບເຂົາວ່າ, "ເຮົາມີອາຫານກິນທີ່ທ່ານທັງຫລາຍບໍ່ຮູ້." 33ພວກສາວົກ
ຈຶ່ງຕັ້ງເວົ້າກັນວ່າ, "ບໍ່ມີໃຜເອົາມາໃຫ້ເພິ່ນຮັບປະທານດອກຕີ້." 34ພຣະເຢຊູຊົງກ່າວກັບເຂົາວ່າ,
"ອາຫານຂອງເຮົາຄື ການເຮັດຕາມພຣະໄທຂອງພຣະອົງຜູ້ຊົງໃຊ້ເຮົາມາ ແລະເຮັດໃຫ້ງານ
ຂອງພຣະອົງສຳເລັດ. 35ທ່ານທັງຫລາຍເວົ້າວ່າອີກສີ່ເດືອນຈະເຖິງລະດູກ່ຽວເຂົ້າບໍ່ແມ່ນຫລື ນີ້
ແຫລະ, ເຮົາບອກທ່ານທັງຫລາຍວ່າ ຈົ່ງເງີຍໜ້າເບິ່ງທົ່ງນາເພາະເຂົ້າກໍເຫລືອງພໍກ່ຽວແລ້ວ.
36ຜູ້ກ່ຽວກໍກຳລັງໄດ້ຮັບຄ່າຈ້າງ ແລະກຳລັງຮີບໂຮມຜົນໄວ້ສຳລັບຊີວິດອັນຕະຫລອດໄປເປັນນິດ
ເພື່ອທັງຜູ້ຫວ່ານແລະຜູ້ກ່ຽວຈະຊົມຊື່ນຍິນດີພ້ອມກັນ. 37ເພາະເຫດນີ້ແຫລະ, ຄຳທີ່ວ່າ 'ຄົນໜຶ່ງ
ຫວ່ານແລະຄົນໜຶ່ງກ່ຽວ' ຈຶ່ງເປັນຄຳຈິງ. 38ເຮົາໃຊ້ທ່ານທັງຫລາຍໄປກ່ຽວອັນທີ່ທ່ານບໍ່ໄດ້ລົງ
ແຮງເຮັດ ຄົນອື່ນໄດ້ລົງແຮງເຮັດແລະພວກທ່ານໄດ້ຮັບປະໂຫຍດຈາກງານຂອງເຂົາ."

39ຊາວຊາມາເຣຍຈຳນວນຫລວງຫລາຍທີ່ມາຈາກເມືອງນັ້ນໄດ້ເຊື່ອໃນພຣະອົງເພາະຖ້ອຍຄຳ
ຂອງຍິງຜູ້ນັ້ນກ່າວເປັນພະຍານວ່າ, "ເພິ່ນໄດ້ບອກຂ້ອຍເຖິງສິ່ງສາລະພັດທີ່ຂ້ອຍໄດ້ເຮັດມາ
ແລ້ວ." 40ດັ່ງນັ້ນເມື່ອຊາວຊາມາເຣຍ ມາເຖິງພຣະອົງ ເຂົາຈຶ່ງທູນເຊີນພຣະອົງໃຫ້ປະທັບຢູ່ກັບ
ເຂົາ ແລະພຣະອົງກໍປະທັບຢູ່ທີ່ນັ້ນສອງວັນ. 41ແລະຄົນອື່ນອີກຈຳນວນຫລວງຫລາຍໄດ້ເຊື່ອ
ດ້ວຍພຣະທຳຂອງພຣະອົງ. 42ຄົນເຫລົ່ານັ້ນໄດ້ກ່າວຕໍ່ຍິງຜູ້ນັ້ນວ່າ, "ຕັ້ງແຕ່ນີ້ໄປທີ່ເຮົາເຊື່ອນັ້ນບໍ່
ແມ່ນເພາະຄຳຂອງເຈົ້າແຕ່ເພາະເຮົາໄດ້ຍິນເອງ ແລະເຮົາຮູ້ວ່າທ່ານຜູ້ນີ້ແທ້ເປັນພຣະຜູ້ໂຜດມະ-
ນຸດສະໂລກໃຫ້ພົ້ນ."

## ພຣະເຢຊູຊົງໂຜດລູກຊາຍເຈົ້ານາຍຜູ້ໜຶ່ງໃຫ້ດີ

*(ມທ 8:5-13; ລກ 7:1-10)*

43ຄັນສອງວັນນັ້ນລ່ວງໄປແລ້ວ ພຣະເຢຊູສະເດັດອອກຈາກທີ່ນັ້ນໄປຍັງແຂວງຄາລີເລ.
44ເພາະພຣະເຢຊູເອງຊົງເປັນພະຍານວ່າ ຜູ້ປະກາດພຣະທຳບໍ່ໄດ້ຮັບກຽດໃນບ້ານເມືອງຂອງ
ຕົນ. 45ເມື່ອພຣະອົງສະເດັດໄປເຖິງແຂວງຄາລີເລ ຊາວຄາລີເລໄດ້ຕ້ອນຮັບພຣະອົງ ເພາະ
ເຂົາໄດ້ເຫັນສິ່ງສາລະພັດທີ່ພຣະອົງຊົງກະທຳໃນເທດສະການທີ່ກຸງເຢຣູຊາເລັມ ດ້ວຍວ່າເຂົາ
ໄດ້ໄປໃນເທດສະການເໝືອນກັນ.

46ແລ້ວພຣະອົງໄດ້ສະເດັດໄປຍັງບ້ານການາໃນແຂວງຄາລີເລອີກ ຄືບ່ອນທີ່ພຣະອົງຊົງ
ເຮັດໃຫ້ນ້ຳກາຍເປັນເຫລົ້າແວງນັ້ນ ມີເສນາບໍດີຄົນໜຶ່ງໃນເມືອງກາເປນາອູມ ຊຶ່ງລູກຊາຍຂອງ
ທ່ານກໍປ່ວຍຢູ່. 47ເມື່ອທ່ານໄດ້ຍິນຂ່າວວ່າພຣະເຢຊູໄດ້ສະເດັດຈາກແຂວງຢູດາຍມາເຖິງ
ແຂວງຄາລີເລແລ້ວ ທ່ານຈຶ່ງໄປທູນອ້ອນວອນພຣະອົງໃຫ້ສະເດັດລົງໄປໂຜດລູກຂອງຕົນໃຫ້ດີ
ເພາະລູກນັ້ນໃກ້ຈະຕາຍແລ້ວ. 48ພຣະເຢຊູຊົງກ່າວກັບທ່ານວ່າ. "ຖ້າທ່ານທັງຫລາຍບໍ່ເຫັນ

ໝາຍສຳຄັນ ແລະການອັດສະຈັນທ່ານຈະບໍ່ເຊື່ອ." 49ເສນາບໍດີຜູ້ນັ້ນຈຶ່ງທູນພຣະອົງວ່າ, "ນາຍ
ເອີຍ, ຂໍເຊີນທ່ານລົງໄປກ່ອນທີ່ລູກຂ້ານ້ອຍຈະຕາຍ." 50ພຣະເຢຊູຊົງກ່າວກັບທ່ານວ່າ, "ຈົ່ງ
ກັບເມືອສາລູກຂອງທ່ານຈະບໍ່ຕາຍ" ແລະທ່ານໄດ້ເຊື່ອພຣະທຳທີ່ພຣະເຢຊູຊົງກ່າວແກ່ເພິ່ນ
ແລ້ວກໍທູນລາກັບເມືອ.

51ໃນຂະນະທີ່ທ່ານກຳລັງກັບເມືອ ພວກຂ້ອຍໃຊ້ໄດ້ມາຕ້ອນຮັບ ບອກຂ່າວວ່າລູກຂອງທ່ານ
ພົ້ນຊີວິດແລ້ວ. 52ທ່ານຈຶ່ງຖາມເຖິງເວລາທີ່ລູກຕັ້ງຕົ້ນມີແຮງມາ ຄົນເຫລົ່ານັ້ນບອກວ່າ, "ໄຂ້ກໍ
ຫາຍຈາກລາວວານນີ້ເວລາບ່າຍໂມງໜຶ່ງ." 53ບິດາຈຶ່ງຮູ້ວ່າຊົ່ວໂມງນັ້ນແຫລະ, ເປັນເວລາທີ່
ພຣະເຢຊູໄດ້ກ່າວກັບຕົນວ່າ, "ລູກຂອງທ່ານຈະບໍ່ຕາຍ" ແລະທ່ານເອງກໍເຊື່ອພ້ອມທັງຄົວເຮືອນ
ຂອງຕົນ. 54ນີ້ເປັນໝາຍສຳຄັນທີສອງທີ່ພຣະເຢຊູຊົງກະທຳ ເມື່ອພຣະອົງສະເດັດຈາກແຂວງ
ຢູດາຍໄປຍັງແຂວງຄາລີເລ.

# ບົດທີ 5

## ຊົງໂຜດຄົນໜຶ່ງຢູ່ແຄມສະໃຫ້ດີພະຍາດ

1ຫລັງຈາກນັ້ນກໍເຖິງເທດສະການຂອງຊາດຢິວ ແລະພຣະເຢຊູກໍສະເດັດຂຶ້ນເມືອຍັງກຸງເຢ-
ຣູຊາເລັມ. 2ໃນກຸງເຢຣູຊາເລັມທີ່ຮິມປະຕູແກະມີສະໜ່ວຍໜຶ່ງ ພາສາເຮັບເຣີເອີ້ນສະນັ້ນວ່າ
ເບັດສາທາ ມີສາລາອ້ອມຢູ່ຫ້າຫລັງ. 3ໃນສາລາເຫລົ່ານັ້ນມີຄົນປ່ວຍເປັນຈຳນວນຫລາຍ ຄືຄົນ
ຕາບອດ, ຄົນຂາເສັ້ງ, ແລະຄົນອົງຄະລີບນອນຢູ່ [ຄອຍຖ້ານ້ຳເຟືອນ. 4ດ້ວຍວ່າມີເທວະດາຄົນ
ໜຶ່ງຂອງພຣະຜູ້ເປັນເຈົ້າລົງມາກວນນ້ຳສະນັ້ນເປັນຍາມໆ ແລະເມື່ອນ້ຳເຟືອນຜູ້ໃດລົງໄປໃນ
ນ້ຳກ່ອນກໍຫາຍຈາກພະຍາດທີ່ຕົນເປັນຢູ່ນັ້ນ]. 5ທີ່ນັ້ນມີຊາຍຄົນໜຶ່ງປ່ວຍຢູ່ໄດ້ສາມສິບແປດປີມາ
ແລ້ວ. 6ເມື່ອພຣະເຢຊູຊົງເຫັນຄົນນັ້ນນອນຢູ່ ແລະຊົງຊາບວ່າລາວເປັນຢູ່ຢ່າງນັ້ນເຫິງແລ້ວ
ພຣະອົງຈຶ່ງຊົງຖາມວ່າ, "ເຈົ້າຢາກດີຫລື." 7ຄົນປ່ວຍນັ້ນຈຶ່ງທູນວ່າ, "ນາຍເອີຍ, ເວລານ້ຳ
ເຟືອນຂຶ້ນບໍ່ມີໃຜຈະເອົາຂ້ານ້ອຍລົງໄປໃນສະ ແລະເມື່ອຂ້ານ້ອຍກຳລັງລົງໄປຄົນອື່ນກໍລົງໄປ
ກ່ອນແລ້ວ." 8ພຣະເຢຊູຊົງບອກຄົນນັ້ນວ່າ, "ຈົ່ງລຸກຂຶ້ນຍົກເອົາບ່ອນນອນຂອງເຈົ້າຍ່າງໄປ."
9ໃນທັນໃດນັ້ນຊາຍຄົນນັ້ນກໍດີພະຍາດ ຈຶ່ງຍົກເອົາບ່ອນນອນຂອງຕົນແລ້ວຍ່າງໄປ.

10ວັນນັ້ນເປັນວັນຊະບາໂຕ ດັ່ງນັ້ນພວກຢິວຈຶ່ງເວົ້າກັບຄົນທີ່ຖືກຊົງບັນດານໃຫ້ດີພະຍາດນັ້ນ
ວ່າ, "ວັນນີ້ເປັນວັນຊະບາໂຕ ທີ່ເຈົ້າຈະຍົກເອົາບ່ອນນອນຂອງເຈົ້າໄປກໍຜິດພຣະບັນຍັດ."
11ຄົນນັ້ນຈຶ່ງຕອບເຂົາວ່າ, "ຜູ້ທີ່ໃຫ້ຂ້ານ້ອຍດີພະຍາດນັ້ນໄດ້ບອກຂ້ານ້ອຍວ່າ, 'ຈົ່ງຍົກເອົາບ່ອນ
ນອນຂອງເຈົ້າຍ່າງໄປ'." 12ເຂົາຈຶ່ງຖາມຄົນນັ້ນວ່າ, "ແມ່ນໃຜທີ່ບອກເຈົ້າວ່າ, 'ຈົ່ງເອົາບ່ອນ
ນອນຍ່າງໄປ'." 13ແຕ່ວ່າຄົນທີ່ໄດ້ດີພະຍາດນັ້ນບໍ່ຮູ້ວ່າແມ່ນໃຜ ດ້ວຍວ່າພຣະເຢຊູໄດ້ສະເດັດ
ຫລີບໄປແລ້ວເພາະວ່າຢູ່ທີ່ນັ້ນມີຫລາຍຄົນ.

14ພາຍຫລັງນັ້ນພຣະເຢຊູໄດ້ຊົງພົບຄົນນັ້ນໃນບໍລິເວນພຣະວິຫານ ແລ້ວຊົງບອກວ່າ, "ນີ້
ແຫລະ, ເຈົ້າດີພະຍາດແລ້ວ ຢ່າເຮັດບາບຕໍ່ໄປ ຢ້ານວ່າເຫດຮ້າຍກວ່ານັ້ນຈະເກີດກັບເຈົ້າອີກ."
15ຊາຍຜູ້ນັ້ນກໍໄດ້ໄປບອກພວກຢິວວ່າ ຜູ້ທີ່ໄດ້ເຮັດໃຫ້ຕົວດີພະຍາດນັ້ນຄືພຣະເຢຊູ.

16ເຫດສັນນັ້ນພວກຢິວ ຈຶ່ງໄດ້ຂົ່ມເຫງ ພຣະເຢຊູ ເພາະພຣະອົງຊົງ ເຮັດການນັ້ນໃນວັນ ຊະ-
ບາໂຕ. 17ແຕ່ ພຣະເຢຊູ ຊົງຕອບ ເຂົາວ່າ, "ພຣະບິດາ ຂອງ ເຮົາຍັງຊົງກະທຳກິດຈະການມາຈົນ
ເຖິງບັດນີ້ ແລະຝ່າຍ ເຮົາກໍເຮັດຢູ່ ເໝືອນກັນ." 18ເຫດສັນນັ້ນພວກຢິວ ແຮ່ງຊອກ ໂອກາດຈະຂ້າ
ພຣະອົງ ເສຍ ບໍ່ແມ່ນຍ້ອນພຣະອົງລ່ວງກົດວັນ ຊະບາໂຕ ເທົ່ານັ້ນ ແຕ່ຍັງ ໄດ້ຊົງ ເອີ້ນ ພຣະເຈົ້າ
ວ່າເປັນ ພຣະບິດາ ຂອງຕົນ ຊຶ່ງເປັນການ ເຮັດໃຫ້ຕົນສະເໝີກັນກັບ ພຣະເຈົ້າ.

## ອຳນາດໜ້າທີ່ຂອງພຣະບຸດ

19ພຣະເຢຊູ ຊົງກ່າວກັບ ເຂົາວ່າ, "ເຮົາບອກທ່ານທັງຫລາຍຕາມຄວາມ ຈິງວ່າ ພຣະບຸດ ຈະ
ກະທຳສິ່ງ ໃດຕາມໃຈບໍ່ໄດ້ ນອກຈາກທີ່ ໄດ້ ເຫັນ ພຣະບິດາ ຊົງກະທຳ ເພາະສິ່ງ ໃດທີ່ ພຣະບິດາ
ຊົງກະທຳ ສິ່ງນັ້ນ ແຫລະ, ພຣະບຸດ ຈຶ່ງຊົງກະທຳ ເໝືອນກັນ. 20ເພາະວ່າ ພຣະບິດາ ຊົງຮັກ
ພຣະບຸດ ແລະຊົງສະແດງ ໃຫ້ ພຣະບຸດ ເຫັນທຸກສິ່ງທີ່ພຣະອົງ ເອງຊົງກະທຳ ແລ້ວພຣະອົງຈະ
ຊົງ ສະແດງ ໃຫ້ ພຣະບຸດ ເຫັນ ການ ໃຫຍ່ ກວ່າ ນັ້ນ ອີກ ຊຶ່ງ ທ່ານ ທັງຫລາຍ ຈະ ອັດສະຈັນ ໃຈ.
21ເພາະ ພຣະບິດາ ຊົງບັນດານ ໃຫ້ຄົນທີ່ຕາຍ ແລ້ວຄືນມີຊີວິດສັນໃດ ຖ້າພຣະບຸດປາດຖະໜາຈະ
ບັນດານ ໃຫ້ຜູ້ໃດມີຊີວິດກໍຈະ ເຮັດສັນນັ້ນ ເໝືອນກັນ. 22ເພາະວ່າ ພຣະບິດາ ບໍ່ໄດ້ຊົງພິພາກສາຜູ້
ໃດ ແຕ່ພຣະອົງ ໄດ້ຊົງມອບການພິພາກສາທັງສິ້ນ ໄວ້ກັບ ພຣະບຸດ, 23ເພື່ອຄົນທັງປວງຈະ ໄດ້
ຖວາຍກຽດ ແດ່ ພຣະບຸດ ເໝືອນທີ່ ເຂົາຖວາຍກຽດ ແດ່ ພຣະບິດາ ຜູ້ໃດບໍ່ຖວາຍກຽດແດ່ ພຣະບຸດ
ຜູ້ນັ້ນກໍບໍ່ຖວາຍກຽດແດ່ ພຣະບິດາ ຜູ້ຊົງ ໃຊ້ ພຣະບຸດ ມາ.

24ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດຟັງຄຳຂອງ ເຮົາແລະວາງໃຈໃນພຣະ-
ອົງຜູ້ຊົງ ໃຊ້ ເຮົາມາ ຜູ້ນັ້ນກໍມີຊີວິດອັນຕະຫລອດໄປເປັນນິດ ແລະບໍ່ ເຂົ້າໃນການພິພາກສາແຕ່
ໄດ້ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດແລ້ວ. 25"ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ເວ-
ລານັ້ນໃກ້ຈະ ເຖິງ ແລະບັດນີ້ມາ ເຖິງ ແລ້ວ ຄື ເມື່ອຜູ້ຕາຍ ແລ້ວຈະ ໄດ້ຍິນພຣະສຸລະສຽງ ແຫ່ງ
ພຣະບຸດ ຂອງ ພຣະເຈົ້າ ແລະບັນດາຜູ້ທີ່ ໄດ້ຍິນຈະມີຊີວິດ. 26ເພາະວ່າ ພຣະບິດາ ຊົງພຣະຊົນ
ໃນພຣະອົງ ເອງຢ່າງໃດ ພຣະອົງກໍໄດ້ຊົງປະທານ ໃຫ້ ພຣະບຸດ ຊົງພຣະຊົນ ໃນພຣະອົງ ເອງຢ່າງ
ນັ້ນ, 27ຊ້ຳ ໄດ້ຊົງປະທານ ໃຫ້ພຣະອົງ ມີສິດອຳນາດທີ່ຈະພິພາກສາ ເພາະພຣະອົງຊົງ ເປັນບຸດ
ມະນຸດ.

28ຢ່າປະຫລາດໃຈໃນຂໍ້ນີ້ ເພາະໃກ້ຈະ ເຖິງ ເວລາທີ່ບັນດາຜູ້ທີ່ຢູ່ໃນຂຸມຝັງສົບຈະ ໄດ້ຍິນພຣະ-
ສຸລະສຽງຂອງພຣະອົງ, 29ແລະຈະ ໄດ້ອອກມາ ບັນດາຜູ້ທີ່ ໄດ້ ເຮັດການດີກໍຄືນສູ່ຊີວິດແລະບັນ-
ດາຜູ້ ເຮັດການຊົ່ວກໍຄືນສູ່ການພິພາກສາ.

## ບັນດາພະຍານຝ່າຍພຣະເຢຊູ

30"ເຮົາຈະ ເຮັດສິ່ງ ໃດຕາມລຳພັງໃຈບໍ່ໄດ້ ເຮົາໄດ້ຍິນຢ່າງໃດ ເຮົາກໍພິພາກສາຢ່າງນັ້ນ ແລະ
ການພິພາກສາຂອງ ເຮົາກໍຍຸດຕິທຳ ເພາະວ່າ ເຮົາບໍ່ ໄດ້ພະຍາຍາມ ເຮັດຕາມນ້ຳໃຈຂອງ ເຮົາ ແຕ່
ຕາມນ້ຳພຣະໄທຂອງພຣະອົງຜູ້ຊົງ ໃຊ້ ເຮົາມາ.

31ຖ້າ ເຮົາ ເປັນພະຍານ ໃຫ້ຕົວ ເຮົາ ເອງ ຄຳພະຍານຂອງ ເຮົາກໍບໍ່ຈິງ. 32ມີອີກຜູ້ໜຶ່ງທີ່ ເປັນພະ-
ຍານ ໃຫ້ ແກ່ ເຮົາ ແລະ ເຮົາ ຮູ້ວ່າ ຄຳ ພະຍານ ທີ່ ຜູ້ນັ້ນ ເປັນ ພະຍານ ໃຫ້ ແກ່ ເຮົາ ເປັນຄວາມ ຈິງ.

[33]ທ່ານທັງຫລາຍໄດ້ໃຊ້ຄົນໄປຫາໂຢຮັນ ແລະ ໂຢຮັນກໍໄດ້ເປັນພະຍານໃນເລື່ອງຄວາມຈິງ.
[34]ແຕ່ຝ່າຍເຮົາ, ເຮົາບໍ່ໄດ້ຮັບຄຳພະຍານຈາກມະນຸດ ແຕ່ເຮົາກ່າວສິ່ງເຫລົ່ານີ້ເພື່ອທ່ານທັງ-
ຫລາຍຈະໄດ້ລອດພົ້ນ. [35]ໂຢຮັນເປັນໂຄມທີ່ໄຕ້ສ່ອງສະຫວ່າງຢູ່ ທ່ານທັງຫລາຍກໍພໍໃຈທີ່ຈະ
ຍິນດີໃນຄວາມສະຫວ່າງຂອງເພິ່ນຊົ່ວຂະນະໜຶ່ງ

[36]ແຕ່ເຮົາມີຄຳພະຍານສຳຄັນກວ່າຄຳພະຍານຂອງໂຢຮັນອີກ ເພາະວ່າງານທີ່ພຣະບິດາຊົງ
ມອບໃຫ້ເຮົາເຮັດໃຫ້ສຳເລັດ ຄືງານທີ່ເຮົາກຳລັງເຮັດຢູ່ນີ້ແຫລະ, ກໍເປັນພະຍານໃຫ້ແກ່ເຮົາວ່າ
ພຣະບິດາຊົງໃຊ້ເຮົາມາ. [37]ພຣະບິດາຜູ້ຊົງໃຊ້ເຮົາມາ ພຣະອົງເອງໄດ້ຊົງເປັນພະຍານໃຫ້ແກ່
ເຮົາ ທ່ານທັງຫລາຍບໍ່ໄດ້ຍິນພຣະສຸລະສຽງຂອງພຣະອົງ ແລະບໍ່ເຫັນຮູບຮ່າງຂອງພຣະອົງຈັກ
ເທື່ອ. [38]ທ່ານທັງຫລາຍບໍ່ມີຄຳໂອວາດຂອງພຣະອົງຢູ່ໃນໃຈ ເພາະວ່າທ່ານທັງຫລາຍບໍ່ໄດ້ວາງ-
ໃຈໃນພຣະອົງຜູ້ທີ່ພຣະບິດາຊົງໃຊ້ມານັ້ນ. [39]ທ່ານທັງຫລາຍຄົ້ນຫາໃນພຣະທຳຄຳພີ ເພາະ
ພວກທ່ານຄຶດວ່າໃນພຣະທຳຄຳພີນັ້ນມີຊີວິດອັນຕະຫລອດໄປເປັນນິດ ແມ່ນພຣະຄຳພີນັ້ນ
ແຫລະ ເປັນພະຍານໃຫ້ແກ່ເຮົາ. [40]ແຕ່ທ່ານທັງຫລາຍຍັງບໍ່ມີໃຈຢາກມາຫາເຮົາເພື່ອຈະໄດ້ຊີ-
ວິດ.

[41]ເຮົາບໍ່ຮັບເອົາຍົດສັກຈາກມະນຸດ. [42]ແຕ່ເຮົາໄດ້ສັງເກດຮູ້ທ່ານທັງຫລາຍວ່າບໍ່ມີຄວາມຮັກ
ພຣະເຈົ້າໃນໃຈຂອງພວກທ່ານ. [43]ເຮົາໄດ້ມາໃນພຣະນາມພຣະບິດາຂອງເຮົາ ແລະທ່ານທັງ-
ຫລາຍບໍ່ໄດ້ຮັບເຮົາ ຖ້າຜູ້ອື່ນມາໃນນາມຂອງຕົນເອງພວກທ່ານກໍຈະຮັບຜູ້ນັ້ນ. [44]ທ່ານທັງ-
ຫລາຍທີ່ຮັບຍົດສັກຈາກກັນແລະກັນ ແລະບໍ່ສະແຫວງຫາຍົດສັກ ຊຶ່ງມາຈາກພຣະອົງຜູ້ຊົງເປັນ
ພຣະເຈົ້າ ແຕ່ອົງດຽວພວກທ່ານຈະເຊື່ອໄດ້ຢ່າງໃດ.

[45]ຢ່າຄຶດວ່າເຮົາຈະຟ້ອງທ່ານທັງຫລາຍຕໍ່ພຣະບິດາ ມີຜູ້ຟ້ອງພວກທ່ານແລ້ວ ຄືໂມເຊຜູ້ຊຶ່ງ
ພວກທ່ານຫວັງໃຈຢູ່. [46]ຖ້າທ່ານທັງຫລາຍເຊື່ອໂມເຊ ພວກທ່ານກໍຄົງຈະເຊື່ອເຮົາເໝືອນກັນ
ເພາະໂມເຊໄດ້ຂຽນເຖິງເລື່ອງເຮົາ. [47]ແຕ່ຖ້າທ່ານທັງຫລາຍບໍ່ເຊື່ອເລື່ອງທີ່ໂມເຊຂຽນແລ້ວ
ພວກທ່ານຈະເຊື່ອຖ້ອຍຄຳຂອງເຮົາໄດ້ຢ່າງໃດ."

# ບົດທີ 6

## ຊົງລ້ຽງຫ້າພັນຄົນ

*(ມທ 14:13-21; ມຣກ 6:30-44; ລກ 9:10-17)*

[1]ຫລັງຈາກນັ້ນພຣະເຢຊູໄດ້ສະເດັດຂ້າມທະເລສາບຄາລີເລ ຄືທະເລຕິເບເຣຍ. [2]ປະຊາຊົນ
ເປັນຈຳນວນຫລວງຫລາຍຕິດຕາມພຣະອົງໄປ ເພາະເຂົາໄດ້ເຫັນໝາຍສຳຄັນທີ່ພຣະອົງຊົງເຮັດ
ໃຫ້ແກ່ຄົນເຈັບປ່ວຍ. [3]ພຣະເຢຊູໄດ້ສະເດັດຂຶ້ນໄປຍັງພູແລະປະທັບນັ່ງລົງທີ່ນັ້ນກັບພວກສາວົກ
ຂອງພຣະອົງ. [4]ຂະນະນັ້ນໃກ້ຈະເຖິງປັດສະຄາຊຶ່ງເປັນເທດສະການຂອງຊາດຢິວແລ້ວ. [5]ຝ່າຍ
ພຣະເຢຊູຊົງເງີຍພຣະພັກເຫັນຄົນເປັນຈຳນວນຫລວງຫລາຍມາຫາພຣະອົງ ພຣະອົງຊົງກ່າວ
ກັບຟີລິບວ່າ, "ພວກເຮົາຈະຊື້ອາຫານທີ່ໃດໃຫ້ຄົນເຫລົ່ານີ້ກິນ." [6]ທີ່ພຣະອົງຊົງກ່າວຢ່າງນັ້ນກໍ
ເພື່ອຈະລອງໃຈຟີລິບ ເພາະພຣະອົງຊົງຊາບແລ້ວວ່າຈະຊົງເຮັດປະການໃດ. [7]ຟີລິບທູນຕອບ

ພຣະອົງວ່າ, "ອາຫານລາຄາສອງຮ້ອຍເດນາຣິອົນກໍບໍ່ພໍໃຫ້ທຸກຄົນກິນຜູ້ລະເລັກລະນ້ອຍດອກ."
[8]ສາວົກຜູ້ໜຶ່ງຄື ອັນເດອາ ນ້ອງຊາຍຂອງຊີໂມນ ເປໂຕ ໄດ້ທູນພຣະອົງວ່າ, [9]"ຢູ່ທີ່ນີ້ມີເດັກນ້ອຍ
ຄົນໜຶ່ງ ມີເຂົ້າຈີ່ເຮັດດ້ວຍ ເຂົ້າຝ້າງຫ້າກ້ອນກັບປາສອງໂຕ ແຕ່ສິ່ງນີ້ຈະພໍໄດ້ຢ່າງໃດກັບຄົນ
ຫລວງຫລາຍປານນີ້."

[10]ພຣະເຢຊູ ຊົງສັ່ງວ່າ, "ຈົ່ງໃຫ້ຄົນທັງຫລາຍນັ່ງລົງເສຍ" ທີ່ນັ້ນມີຫຍ້າຫລາຍ ຄົນເຫລົ່ານັ້ນ
ຈຶ່ງນັ່ງລົງ ນັບແຕ່ຜູ້ຊາຍມີປະມານຫ້າພັນຄົນ. [11]ແລ້ວ ພຣະເຢຊູ ຊົງຈັບເຂົ້າຈີ່ນັ້ນ ເມື່ອໂມທະນາ
ພຣະຄຸນ ແລ້ວກໍຊົງ ແຈກແກ່ບັນດາຄົນທີ່ນັ່ງຢູ່ນັ້ນ ສ່ວນປາກໍຊົງໃຫ້ເໝືອນກັນຕາມທີ່ເຂົາຕ້ອງ-
ການ. [12]ເມື່ອເຂົາກິນອີ່ມແລ້ວ ພຣະເຢຊູ ຊົງບອກພວກສາວົກວ່າ, "ຈົ່ງເກັບເອົາຕ່ອນຫັກທີ່ເຫລືອ
ນັ້ນ ເພື່ອບໍ່ໃຫ້ອັນໃດເສຍ." [13]ເຂົາໄດ້ເກັບເອົາຕ່ອນຫັກທີ່ເຫລືອຈາກເຂົ້າຈີ່ທີ່ເຮັດດ້ວຍເຂົ້າຝ້າງ
ຫ້າກ້ອນ ຊຶ່ງຄົນທັງຫລາຍໄດ້ກິນນັ້ນ ໄດ້ເຕັມສິບສອງບຸງ.

[14]ເມື່ອຄົນທັງຫລາຍໄດ້ເຫັນໝາຍສຳຄັນທີ່ ພຣະອົງໄດ້ຊົງເຮັດນັ້ນ ເຂົາກໍເວົ້າກັນວ່າ, "ຈິງ
ແທ້ທ່ານຜູ້ນີ້ເປັນຜູ້ປະກາດພຣະທຳນັ້ນທີ່ຊົງກຳນົດວ່າຈະມາໃນໂລກ." [15]ເມື່ອ ພຣະເຢຊູ ຊົງຊາບ
ວ່າ ເຂົາຈະມາຈັບເອົາໄປແຕ່ງຕັ້ງໃຫ້ພຣະອົງເປັນເຈົ້າແຜ່ນດິນ ພຣະອົງຈຶ່ງສະເດັດອອກໄປຍັງ
ພູເຂົາອີກແຕ່ອົງດຽວ.

## ພຣະເຢຊູຊົງດຳເນີນເທິງນ້ຳ

*(ມທ 14:22-27; ມຣກ 6:45-52)*

[16]ເມື່ອຄ່ຳມາ ແລ້ວພວກສາວົກຂອງພຣະອົງໄດ້ລົງໄປເຖິງທະເລ, [17]ແລ້ວລົງເຮືອຂ້າມຟາກ
ໄປຍັງເມືອງ ກາເປນາອູມ ເມື່ອມືດແລ້ວ ພຣະເຢຊູ ກໍຍັງບໍ່ໄດ້ສະເດັດໄປເຖິງເຂົາ. [18]ອັນໜຶ່ງນ້ຳ
ທະເລກໍກຳເລີບຂຶ້ນ ເພາະລົມແດງພັດ. [19]ເມື່ອເຂົາແຈວເຮືອໄປໄດ້ປະມານສອງພັນຫ້າຫລືສາມ
ພັນວາ ເຂົາກໍເຫັນ ພຣະເຢຊູ ຊົງຍ່າງເທິງນ້ຳມາໃກ້ເຮືອ ເຂົາຈຶ່ງຕົກໃຈ. [20]ແຕ່ ພຣະເຢຊູ ຊົງ
ບອກເຂົາວ່າ, "ແມ່ນເຮົາເອງ ຢ່າຊູ່ຢ້ານ." [21]ດັ່ງນັ້ນເຂົາຈຶ່ງພໍໃຈໃຫ້ພຣະອົງຂຶ້ນເຮືອ ແລ້ວທັນ-
ໃດນັ້ນເຮືອກໍເຖິງຝັ່ງບ່ອນເຂົາຈະໄປນັ້ນ.

## ປະຊາຊົນຕາມຊອກຫາພຣະອົງ

[22]ມື້ໜ້ານັ້ນປະຊາຊົນທີ່ເຫລືອຢູ່ທະເລຟາກນັ້ນ ເຫັນວ່າກ່ອນນັ້ນມີເຮືອຢູ່ທີ່ນັ້ນພຽງແຕ່ລຳດຽວ
ແລະ ເຫັນວ່າ ພຣະເຢຊູ ບໍ່ໄດ້ສະເດັດລົງເຮືອລຳນັ້ນ ໄປກັບພວກສາວົກ ມີແຕ່ພວກສາວົກຂອງ
ພຣະອົງໄປ ເທົ່ານັ້ນ. [23]ແຕ່ກໍມີເຮືອລຳອື່ນຈາກ ເມືອງ ຕີເບເຣຍ ມາຈອດໃກ້ບ່ອນທີ່ເຂົາໄດ້ກິນ
ເຂົ້າຈີ່ ຫລັງຈາກທີ່ອົງ ພຣະຜູ້ເປັນເຈົ້າ ໄດ້ຊົງຂອບພຣະຄຸນແລ້ວ. [24]ເຫດສັນນັ້ນເມື່ອປະຊາຊົນ
ເຫັນວ່າ ພຣະເຢຊູ ແລະພວກສາວົກບໍ່ຢູ່ທີ່ນັ້ນ ເຂົາຈຶ່ງພາກັນລົງໄປຕາມຫາ ພຣະເຢຊູ ທີ່ເມືອງ
ກາເປນາອູມ.

## ພຣະເຢຊູຄືອາຫານແຫ່ງຊີວິດ

[25]ເມື່ອເຂົາໄດ້ພົບພຣະອົງຟາກທະເລສາບເບື້ອງນັ້ນແລ້ວ ເຂົາໄດ້ທູນພຣະອົງວ່າ, "ອາຈານ
ເຈົ້າຂ້າເອີຍ, ທ່ານມາທີ່ນີ້ເມື່ອໃດ." [26]ພຣະເຢຊູ ຊົງຕອບເຂົາວ່າ, "ເຮົາບອກພວກທ່ານຕາມຈິງ
ວ່າພວກທ່ານຊອກຫາເຮົາ ບໍ່ແມ່ນຍ້ອນໄດ້ເຫັນໝາຍສຳຄັນນັ້ນແຕ່ເພາະໄດ້ກິນເຂົ້າຈີ່ອີ່ມ. [27]ຢ່າ

ພະຍາຍາມຫາອາຫານທີ່ສູນສິ້ນໄປ ແຕ່ຈົ່ງຫາອາຫານທີ່ຕັ້ງໝັ້ນຢູ່ ຄືອາຫານສຳລັບຊີວິດອັນ
ຕະຫລອດໄປເປັນນິດ ຊຶ່ງບຸດມະນຸດຈະໃຫ້ແກ່ພວກທ່ານ ເພາະແມ່ນພຣະອົງນີ້ແຫລະ, ທີ່
ພຣະເຈົ້າຄືພຣະບິດາໄດ້ຊົງປະທັບຕາໝາຍໄວ້ແລ້ວ.”
28ແລ້ວເຂົາຈຶ່ງທູນພຣະອົງວ່າ, “ພວກຂ້ານ້ອຍຈະຕ້ອງເຮັດປະການໃດ ຈຶ່ງຈະເຮັດກິດຈະ-
ການຂອງພຣະອົງໄດ້.” 29ພຣະເຢຊູຊົງຕອບເຂົາວ່າ, “ນີ້ແຫລະ, ແມ່ນກິດຈະການຂອງພຣະ-
ເຈົ້າ ຄືການທີ່ທ່ານທັງຫລາຍວາງໃຈໃນທ່ານທີ່ພຣະອົງຊົງໃຊ້ມາ.” 30ແລ້ວເຂົາຈຶ່ງທູນພຣະອົງ
ວ່າ, “ດັ່ງນັ້ນທ່ານຈະເຮັດໝາຍສຳຄັນອັນໃດ ເພື່ອພວກຂ້ານ້ອຍຈະໄດ້ເຫັນແລະວາງໃຈໃນ
ທ່ານ ມີການອັນໃດທີ່ທ່ານຈະເຮັດແດ່. 31ບັນພະບຸລຸດຂອງພວກຂ້ານ້ອຍໄດ້ກິນມານາໃນປ່າ
ດັ່ງຄຳທີ່ຂຽນໄວ້ວ່າ, ‘ພຣະອົງຊົງປະທານອາຫານຈາກສະຫວັນໃຫ້ເຂົາກິນ.’”
32ພຣະເຢຊູຊົງຕອບເຂົາວ່າ, “ເຮົາບອກພວກທ່ານຕາມຈິງວ່າ ອາຫານທີ່ມາຈາກສະຫວັນ
ນັ້ນບໍ່ແມ່ນໂມເຊເອົາໃຫ້ພວກທ່ານ ແຕ່ພຣະບິດາຂອງເຮົາຊົງເປັນຜູ້ປະທານອາຫານອັນແທ້
ຊຶ່ງມາຈາກສະຫວັນໃຫ້ແກ່ທ່ານທັງຫລາຍ. 33ເພາະວ່າອາຫານທີ່ພຣະເຈົ້າຊົງປະທານນັ້ນ ຄື
ທ່ານທີ່ລົງມາຈາກສະຫວັນແລະປະທານຊີວິດໃຫ້ແກ່ໂລກ.” 34ເຂົາຈຶ່ງທູນພຣະອົງວ່າ, “ນາຍ
ເຈົ້າເອີຍ, ຈົ່ງປະທານອາຫານນັ້ນໃຫ້ພວກຂ້ານ້ອຍມີຢູ່ສະເໝີ.”
35ພຣະເຢຊູຊົງຕອບເຂົາວ່າ, “ເຮົາເປັນອາຫານທິບແຫ່ງຊີວິດ ຜູ້ທີ່ມາຫາເຮົາຈະບໍ່ຢາກເຂົ້າ
ແລະຜູ້ທີ່ວາງໃຈໃນເຮົາຈະບໍ່ຫິວນ້ຳຈັກເທື່ອ. 36ແຕ່ເຮົາບອກທ່ານທັງຫລາຍແລ້ວວ່າ ພວກທ່ານ
ໄດ້ເຫັນເຮົາແລ້ວແຕ່ກໍຍັງບໍ່ເຊື່ອ. 37ສາລະພັດທີ່ພຣະບິດາຊົງປະທານໃຫ້ແກ່ເຮົາຈະມາຫາເຮົາ
ແລະຜູ້ທີ່ມາຫາເຮົາ ເຮົາຈະບໍ່ຖິ້ມອອກໄປພາຍນອກຈັກເທື່ອ. 38ເພາະວ່າເຮົາໄດ້ລົງມາຈາກສະ-
ຫວັນ ບໍ່ແມ່ນເພື່ອຈະເຮັດຕາມໃຈຂອງເຮົາເອງ ແຕ່ເພື່ອເຮັດຕາມພະໄທຂອງພຣະອົງຜູ້ຊົງໃຊ້
ເຮົາມາ. 39ອັນນີ້ແຫລະ, ແມ່ນນ້ຳພຣະໄທຂອງຜູ້ຊົງໃຊ້ເຮົາມາ ຄືໃຫ້ເຮົາຮັກສາທຸກສິ່ງທີ່ພຣະ-
ອົງຊົງມອບໄວ້ກັບເຮົານັ້ນ ບໍ່ໃຫ້ສິ່ງໃດສູນຫາຍໄປແຕ່ໃຫ້ເປັນຄືນມາໃນວັນສຸດທ້າຍ. 40ເພາະນີ້
ແຫລະ, ເປັນນ້ຳພຣະໄທພຣະບິດາຂອງເຮົາ ຄືໃຫ້ທຸກຄົນທີ່ເຫັນພຣະບຸດ ແລະວາງໃຈໃນ
ພຣະບຸດນັ້ນ ໄດ້ມີຊີວິດອັນຕະຫລອດໄປເປັນນິດ ແລະເຮົາຈະໃຫ້ຜູ້ນັ້ນເປັນຄືນມາໃນວັນສຸດ
ທ້າຍ.”
41ດັ່ງນັ້ນພວກຢິວຈຶ່ງພາກັນຈົ່ມໃຫ້ພຣະອົງເພາະພຣະອົງຊົງກ່າວວ່າ, “ເຮົາເປັນອາຫານທິບ
ທີ່ລົງມາຈາກສະຫວັນ.” 42ເຂົາໄດ້ກ່າວວ່າ, “ຄົນນີ້ບໍ່ແມ່ນລູກຂອງໂຢເຊັບຫລື ພໍ່ແມ່ຂອງລາວ
ເຮົາກໍຮູ້ຈັກ ເຫດສັນໃດຄົນນີ້ຈຶ່ງເວົ້າວ່າ ເຮົາໄດ້ລົງມາຈາກສະຫວັນ.” 43ພຣະເຢຊູຊົງຕອບເຂົາ
ວ່າ, “ຢ່າໄດ້ຈົ່ມເທາະ. 44ບໍ່ມີຜູ້ໃດມາຫາເຮົາໄດ້ ເວັ້ນໄວ້ແຕ່ພຣະບິດາຜູ້ຊົງໃຊ້ເຮົາມານັ້ນຈະ
ຊົງຊັກນຳໃຫ້ເຂົາມາ ແລະຝ່າຍເຮົາ, ເຮົາຈະໃຫ້ຜູ້ນັ້ນຄືນມາໃນວັນສຸດທ້າຍ. 45ມີຄຳຂຽນໄວ້ໃນ
ຄຳພີຜູ້ປະກາດພຣະທຳວ່າ ‘ຄົນທັງຫລາຍຈະຮັບຄວາມສອນຈາກພຣະເຈົ້າ’ ທຸກຄົນທີ່ໄດ້ຍິນໄດ້
ຟັງ ແລະໄດ້ຮຽນຮູ້ຈາກພຣະເຈົ້າກໍມາຫາເຮົາ. 46ບໍ່ມີຜູ້ໃດເຫັນພຣະບິດານອກຈາກຜູ້ທີ່ມາຈາກ
ພຣະເຈົ້າ ຜູ້ນັ້ນແຫລະ, ໄດ້ເຫັນພຣະບິດາແລ້ວ. 47ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ
ຜູ້ທີ່ວາງໃຈໃນເຮົາກໍມີຊີວິດອັນຕະຫລອດໄປເປັນນິດ. 48ເຮົາເປັນອາຫານທິບຂອງຊີວິດ. 49ບັນ-

ພະບຸລຸດຂອງທ່ານທັງຫລາຍໄດ້ກິນ ມານາ ໃນປ່າ ແລະເຂົາໄດ້ຕາຍໄປ. [50]ນີ້ແຫລະ, ເປັນອາ-
ຫານທີ່ລົງມາຈາກສະຫວັນ ເພື່ອຜູ້ທີ່ກິນແລ້ວຈະບໍ່ຕາຍ. [51]ເຮົາເປັນອາຫານທີ່ມີຊີວິດຊຶ່ງລົງມາ
ຈາກສະຫວັນ ຖ້າຜູ້ໃດກິນອາຫານນີ້ແລ້ວ ຜູ້ນັ້ນຈະມີຊີວິດສືບໆ ໄປເປັນນິດ ແລະອາຫານທີ່
ຝ່າຍເຮົາຈະໃຫ້ເພື່ອເປັນຊີວິດຂອງໂລກນັ້ນ ກໍຄືເນື້ອກາຍຂອງເຮົາ.”

[52]ເຫດສັນນີ້ພວກ ຢິວ ຈຶ່ງຖາມກັນວ່າ, “ຜູ້ນີ້ຈະເອົາເນື້ອຕົວຂອງຕົນໃຫ້ເຮົາກິນໄດ້ຢ່າງໃດ.”
[53]ພຣະເຢຊູ ຈຶ່ງຊົງກ່າວກັບເຂົາວ່າ, “ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າພວກທ່ານບໍ່
ກິນເນື້ອຕົວ ແລະບໍ່ດື່ມເລືອດຂອງບຸດມະນຸດທ່ານກໍບໍ່ມີຊີວິດໃນຕົວທ່ານ. [54]ຜູ້ທີ່ກິນເນື້ອຕົວ
ແລະດື່ມເລືອດຂອງເຮົາກໍມີຊີວິດອັນຕະຫລອດໄປເປັນນິດ ແລະເຮົາຈະໃຫ້ຜູ້ນັ້ນເປັນຄືນມາໃນ
ວັນສຸດທ້າຍ. [55]ເພາະວ່າເນື້ອຕົວຂອງເຮົາເປັນອາຫານອັນແທ້ ແລະເລືອດຂອງເຮົາກໍເປັນຂອງ
ດື່ມອັນແທ້. [56]ຜູ້ທີ່ກິນເນື້ອຕົວແລະດື່ມເລືອດຂອງເຮົາ ຜູ້ນັ້ນກໍຕັ້ງຢູ່ໃນເຮົາ ແລະເຮົາຕັ້ງຢູ່ໃນຜູ້
ນັ້ນ. [57]ພຣະບິດາຜູ້ຊົງພຣະຊົນຢູ່ໄດ້ໃຊ້ເຮົາມາ ແລະເຮົາມີຊີວິດຢູ່ເພາະ ພຣະບິດາ ສັນໃດຜູ້ທີ່
ຈະກິນເຮົາກໍຈະມີຊີວິດເພາະເຮົາສັນນັ້ນ. [58]ນີ້ແຫລະ, ເປັນອາຫານຊຶ່ງລົງມາຈາກສະຫວັນ ບໍ່
ເໝືອນກັບອາຫານທີ່ພວກບັນພະບຸລຸດຂອງທ່ານທັງຫລາຍໄດ້ກິນແລ້ວຕາຍໄປ ຜູ້ທີ່ກິນອາຫານ
ນີ້ຈະມີຊີວິດສືບໆ ໄປເປັນນິດ.”

[59]ຂໍ້ຄວາມເຫລົ່ານີ້ພຣະອົງຊົງກ່າວໃນໂຮງທຳມະເທສະໜາ ຂະນະທີ່ພຣະອົງຊົງສັ່ງສອນຢູ່
ເມືອງ ກາເປນາອູມ.

## ຖ້ອຍຄຳທີ່ໃຫ້ມີຊີວິດອັນຕະຫລອດໄປເປັນນິດ

[60]ເມື່ອໄດ້ຍິນດັ່ງນັ້ນພວກສາວົກຂອງພຣະອົງຫລາຍຄົນຈຶ່ງເວົ້າວ່າ, “ຖ້ອຍຄຳນີ້ແຂງແຮງ
ໃຜຈະຟັງໄດ້.” [61]ແຕ່ ພຣະເຢຊູ ຊົງຊາບດ້ວຍພຣະອົງເອງວ່າພວກສາວົກໄດ້ຈົ່ມເຖິງເລື່ອງນັ້ນ
ຈຶ່ງຊົງຖາມເຂົາວ່າ, “ເລື່ອງນີ້ເຮັດໃຫ້ພວກທ່ານສະດຸດໃຈຫລື. [62]ຖ້າທ່ານທັງຫລາຍຈະເຫັນບຸດ
ມະນຸດຂຶ້ນເມືອຍັງບ່ອນທີ່ທ່ານຢູ່ແຕ່ກ່ອນນັ້ນ ພວກທ່ານຈະວ່າຢ່າງໃດ. [63]ພຣະວິນຍານ ຊົງ
ເຮັດໃຫ້ມີຊີວິດ ສ່ວນເນື້ອກາຍບໍ່ມີປະໂຫຍດອັນໃດ ຖ້ອຍຄຳທີ່ເຮົາໄດ້ກ່າວຕໍ່ທ່ານທັງຫລາຍນັ້ນ
ເປັນວິນຍານແລະເປັນຊີວິດ. [64]ແຕ່ມີບາງຄົນໃນພວກທ່ານຍັງບໍ່ເຊື່ອຢູ່,” (ເພາະ ພຣະເຢຊູ ຊົງ
ຊາບແຕ່ເດີມແລ້ວວ່າຜູ້ທີ່ເຊື່ອນັ້ນແມ່ນຜູ້ໃດ ແລະແມ່ນຜູ້ໃດທີ່ຈະທໍລະຍົດຕໍ່ພຣະອົງ). [65]ແລະ
ພຣະອົງຊົງກ່າວວ່າ, “ດ້ວຍເຫດນີ້ແຫລະ, ເຮົາຈຶ່ງໄດ້ບອກທ່ານທັງຫລາຍວ່າບໍ່ມີຜູ້ໃດຈະມາເຖິງ
ເຮົາໄດ້ ນອກຈາກ ພຣະບິດາ ຈະຊົງໂຜດຜູ້ນັ້ນ.”

[66]ດ້ວຍເຫດນັ້ນພວກລູກສິດຂອງພຣະອົງຫລາຍຄົນຈຶ່ງທໍ້ຖອຍ ບໍ່ຕິດຕາມພຣະອົງຕໍ່ໄປອີກ.
[67]ດັ່ງນັ້ນ ພຣະເຢຊູ ຊົງກ່າວກັບສິບສອງຄົນນັ້ນວ່າ, “ພວກທ່ານເດຢາກຖອຍໜີເໝືອນກັນຫລື.”
[68]ຝ່າຍ ຊີໂມນ ທູນຕອບພຣະອົງວ່າ, “ນາຍເຈົ້າເອີຍ, ພວກຂ້ານ້ອຍຈະໜີໄປຫາຜູ້ໃດ ທ່ານມີ
ຖ້ອຍຄຳຊຶ່ງໃຫ້ມີຊີວິດອັນຕະຫລອດໄປເປັນນິດ. [69]ພວກຂ້ານ້ອຍເຊື່ອແລ້ວ ແລະຊາບວ່າທ່ານ
ເປັນຜູ້ບໍລິສຸດມາຈາກ ພຣະເຈົ້າ.” [70]ພຣະເຢຊູ ຊົງຕອບເຂົາວ່າ, “ເຮົານີ້ແຫລະ, ໄດ້ເລືອກພວກ
ທ່ານສິບສອງຄົນໄວ້ບໍ່ແມ່ນຫລື ແລະຄົນໜຶ່ງໃນພວກທ່ານກໍເປັນມານຮ້າຍ.” [71]ພຣະອົງຊົງກ່າວ
ເຖິງ ຢູດາ ລູກຊາຍຂອງ ຊີໂມນ ອິສະກາຣີອົດ ເພາະແມ່ນຜູ້ທີ່ຈະທໍລະຍົດຕໍ່ພຣະອົງ ຄືຄົນໜຶ່ງ

ໃນພວກສິບສອງຄົນນັ້ນ.

# ບົດທີ 7

## ພວກນ້ອງຊາຍຂອງພຣະເຢຊູບໍ່ວາງໃຈໃນພຣະອົງ

1ຫລັງຈາກນັ້ນ ພຣະເຢຊູ ໄດ້ສະເດັດທ່ອງທ່ຽວໄປຕາມແຂວງຄາລີເລ ບໍ່ຊົງປະສົງຈະສະເດັດ
ໄປໃນແຂວງຢູດາຍ ເພາະພວກຢິວຫາໂອກາດທີ່ຈະຂ້າພຣະອົງເສຍ. 2ຂະນະນັ້ນໃກ້ຈະເຖິງ
ເທດສະການຕັ້ງທັບອາໄສຂອງຊາດຢິວແລ້ວ. 3ພວກນ້ອງຊາຍຂອງພຣະອົງຈຶ່ງທູນພຣະອົງວ່າ,
“ເຈົ້າຈົ່ງອອກຈາກທີ່ນີ້ໄປຍັງແຂວງຢູດາຍ ເພື່ອພວກສາວົກຂອງເຈົ້າຈະໄດ້ເຫັນກິດຈະການທີ່
ເຈົ້າເຮັດຢູ່ນັ້ນ. 4ເພາະວ່າບໍ່ທ່ອນມີຜູ້ໃດເຮັດອັນໃດໃນທີ່ລັບ ເມື່ອຜູ້ນັ້ນຢາກໃຫ້ຕົວປະກົດ ຖ້າ
ເຈົ້າເຮັດການເຫລົ່ານີ້ຈົ່ງສະແດງຕົວໃຫ້ປະກົດແກ່ໂລກເສຍ.” 5(ເພາະວ່າເຖິງແມ່ນພວກນ້ອງ
ຊາຍຂອງພຣະອົງກໍບໍ່ເຊື່ອໃນພຣະອົງ.)

6ພຣະເຢຊູຊົງບອກເຂົາວ່າ, “ເວລາກຳນົດຂອງເຮົາຍັງບໍ່ເຖິງເທື່ອ ແຕ່ເວລາຂອງພວກເຈົ້າກໍ
ມີຢູ່ສະເໝີ. 7ໂລກຈະກຽດຊັງພວກເຈົ້າບໍ່ໄດ້ແຕ່ວ່າມັນຊັງເຮົາ ເພາະເຮົາເປັນພະຍານວ່າກິດຈະ-
ການຂອງໂລກນັ້ນຊົ່ວຮ້າຍ. 8ພວກເຈົ້າຈົ່ງຂຶ້ນໄປໃນເທດສະການນັ້ນເສຍ ຝ່າຍເຮົາຍັງບໍ່ຂຶ້ນໄປ
ໃນເທດສະການນັ້ນເພາະວ່າຍັງບໍ່ເຖິງກຳນົດເວລາຂອງເຮົາ.” 9ເມື່ອຊົງກ່າວດັ່ງນັ້ນແລ້ວພຣະ-
ອົງກໍຍັງໄດ້ປະທັບຢູ່ໃນແຂວງຄາລີເລຕໍ່ໄປ.

## ພຣະເຢຊູໃນເທດສະການຕັ້ງທັບອາໄສ

10ແຕ່ເມື່ອພວກນ້ອງຂອງພຣະອົງຂຶ້ນໄປໃນງານເທດສະການນັ້ນແລ້ວ ພຣະອົງກໍສະເດັດ
ຕາມຂຶ້ນໄປເໝືອນກັນ ແຕ່ສະເດັດໄປທາງລັບບໍ່ເປີດເຜີຍ. 11ເທດສັນນັ້ນພວກຢິວໄດ້ຊອກຫາ
ພຣະອົງໃນເທດສະການນັ້ນແລະຖາມວ່າ, “ຄົນຜູ້ນັ້ນຢູ່ໃສ.” 12ສ່ວນປະຊາຊົນກໍຊຸ່ມກັນຫລາຍ
ເວົ້າເຖິງເລື່ອງພຣະອົງ ລາງຄົນເວົ້າວ່າ, “ເປັນຄົນດີ” ແຕ່ຄົນອື່ນວ່າ, “ບໍ່ແມ່ນ ແຕ່ເພິ່ນເຮັດໃຫ້
ປະຊາຊົນຫລົງຜິດໄປ.” 13ແຕ່ເຖິງປານນັ້ນບໍ່ມີໃຜກ້າເວົ້າເຖິງພຣະອົງຢ່າງເປີດເຜີຍເພາະຢ້ານ
ພວກຢິວ.

14ຄັນເຖິງເຄິ່ງເທດສະການນັ້ນແລ້ວ ພຣະເຢຊູໄດ້ສະເດັດຂຶ້ນໄປຍັງບໍລິເວນພຣະວິຫານແລະ
ຊົງສັ່ງສອນ. 15ພວກຢິວພາກັນປະຫລາດໃຈເວົ້າກັນວ່າ, “ຄົນຜູ້ນີ້ມີຄວາມຮູ້ມາແຕ່ໃສເມື່ອບໍ່ໄດ້
ຮ່ຳຮຽນ.” 16ພຣະເຢຊູຊົງຕອບເຂົາວ່າ, “ຄຳສອນຂອງເຮົາບໍ່ແມ່ນຂອງເຮົາເອງ ແຕ່ເປັນຂອງ
ພຣະອົງຜູ້ຊົງໃຊ້ເຮົາມາ. 17ຖ້າຜູ້ໃດເຕັມໃຈຍອມເຮັດຕາມພຣະໄທຂອງພຣະອົງ ຜູ້ນັ້ນກໍຈະຮູ້ວ່າ
ຄຳສອນນັ້ນມາຈາກພຣະເຈົ້າ ຫລືວ່າເຮົາປາກຕາມໃຈຊອບຂອງເຮົາເອງ. 18ຜູ້ໃດປາກຕາມໃຈ
ຊອບຂອງຕົນເອງ ຜູ້ນັ້ນກໍສະແຫວງກຽດສຳລັບຕົນເອງ ແຕ່ຜູ້ທີ່ສະແຫວງກຽດໃຫ້ພຣະອົງຜູ້ຊົງ
ໃຊ້ຕົນມາ ຜູ້ນັ້ນແຫລະ, ເປັນຄົນຈິງ ແລະບໍ່ມີອະທຳໃນຕົວ. 19ໂມເຊໄດ້ໃຫ້ພຣະບັນຍັດແກ່
ທ່ານທັງຫລາຍບໍ່ແມ່ນຫລື ແລະໃນພວກທ່ານບໍ່ມີຜູ້ໃດຈັກຄົນເຮັດຕາມພຣະບັນຍັດນັ້ນ ທ່ານ
ທັງຫລາຍຊອກຫາຈະຂ້າເຮົາເຮັດຫຍັງ.”

20ປະຊາຊົນຕອບວ່າ, “ເຈົ້າມີຜີຮ້າຍສິງຢູ່ ແມ່ນໃຜຊອກຫາຈະຂ້າເຈົ້າ.” 21ພຣະເຢຊູຊົງ

ຕອບເຂົາວ່າ, "ເຮົາໄດ້ເຮັດກິດຈະການອັນໜຶ່ງ ແລະພວກທ່ານກໍປະຫລາດໃຈເພາະເຫດການ
ນັ້ນ. [22]ໂມເຊໄດ້ຕັ້ງພິທີຕັດໃຫ້ທ່ານທັງຫລາຍ (ບໍ່ແມ່ນໄດ້ມາຈາກໂມເຊ ແຕ່ມາຈາກບັນພະບຸ-
ລຸດ) ແລະໃນວັນຊະບາໂຕ ທ່ານທັງຫລາຍກໍຍັງໃຫ້ຄົນຮັບພິທີຕັດ. [23]ຖ້າເຂົາຍັງໃຫ້ຄົນຮັບພິທີ
ຕັດໃນວັນຊະບາໂຕ ເພື່ອບໍ່ໃຫ້ລ່ວງລະເມີດພຣະບັນຍັດຂອງໂມເຊ ທ່ານທັງຫລາຍຈະຄຽດເຮົາ
ເພາະເຮົາໄດ້ໃຫ້ຄົນໜຶ່ງດີເປັນປົກກະຕິໃນວັນຊະບາໂຕຫລື. [24]ຢ່າຕັດສິນຕາມທີ່ເຫັນພາຍນອກ
ແຕ່ຈົ່ງຕັດສິນຕາມທາງຍຸດຕິທຳ."

## ນີ້ຫລືພຣະຄຣິດ

[25]ຊາວກຸງເຢຣູຊາເລັມລາງຄົນຈຶ່ງເວົ້າວ່າ, "ຄົນຜູ້ນີ້ແຫລະ, ທີ່ເຂົາຊອກຫາຈະຂ້າເສຍບໍ່
ແມ່ນຫລື. [26]ເບິ່ງແມ, ເພິ່ນກ່າວດ້ວຍເປີດເຜີຍ ແລະເຂົາບໍ່ໄດ້ເວົ້າຫຍັງພວກເຈົ້ານາຍຮູ້ຄັກບໍ່ວ່າ
ຄົນນີ້ແມ່ນພຣະຄຣິດ. [27]ເຮົາຮູ້ແລ້ວວ່າຄົນນີ້ມາແຕ່ໃສ ແຕ່ຝ່າຍພຣະຄຣິດ, ເມື່ອພຣະອົງສະ-
ເດັດມາບໍ່ມີໃຜຮູ້ວ່າມາແຕ່ໃສ."

[28]ເຫດສັນນີ້ພຣະເຢຊູຈຶ່ງຊົງສັ່ງສອນດ້ວຍສຽງອັນດັງໃນບໍລິເວນພຣະວິຫານວ່າ, "ສ່ວນເຮົາ
ທ່ານທັງຫລາຍກໍຮູ້ຈັກທັງຮູ້ວ່າເຮົາມາແຕ່ໃສ ເຮົາບໍ່ໄດ້ມາໂດຍລຳພັງຂອງເຮົາເອງ ແຕ່ພຣະອົງ
ຜູ້ຊົງໃຊ້ເຮົາມານັ້ນກໍສັດຈິງ ພຣະອົງນັ້ນພວກທ່ານກໍບໍ່ຮູ້ຈັກ. [29]ຝ່າຍເຮົາກໍຮູ້ຈັກພຣະອົງ ເພາະ
ເຮົາມາຈາກພຣະອົງແລະແມ່ນພຣະອົງນັ້ນແຫລະ, ໄດ້ຊົງໃຊ້ເຮົາມາ."

[30]ດັ່ງນັ້ນເຂົາຈຶ່ງຊອກຫາຈະຈັບພຣະອົງ ແຕ່ບໍ່ມີຜູ້ໃດຍື່ນມືຈັບເພາະຍັງບໍ່ເຖິງກຳນົດເວລາ
ຂອງພຣະອົງເທື່ອ. [31]ແຕ່ມີຫລາຍຄົນໃນໝູ່ປະຊາຊົນໄດ້ວາງໃຈໃນພຣະອົງແລະເວົ້າວ່າ, "ເມື່ອ
ພຣະຄຣິດ ສະເດັດມານັ້ນ ພຣະອົງຈະເຮັດໝາຍສຳຄັນຫລາຍກວ່າຜູ້ນີ້ຫລື."

## ໃຊ້ເຈົ້າໜ້າທີ່ໄປຈັບພຣະເຢຊູ

[32]ເມື່ອພວກຟາຣີຊາຍໄດ້ຍິນປະຊາຊົນຊຸ່ມກັນເວົ້າເຖິງເລື່ອງພຣະອົງຢ່າງນັ້ນ ພວກປະໂລ-
ຫິດຕົນໃຫຍ່ກັບພວກຟາຣີຊາຍ ຈຶ່ງໃຊ້ເຈົ້າໜ້າທີ່ໄປຈັບພຣະອົງ. [33]ພຣະເຢຊູຈຶ່ງຊົງກ່າວວ່າ,
"ເຮົາຈະຢູ່ກັບທ່ານທັງຫລາຍຕໍ່ໄປອີກໜ້ອຍໜຶ່ງ ແລ້ວຈະກັບໄປຫາພຣະອົງຜູ້ຊົງໃຊ້ເຮົາມາ.
[34]ທ່ານທັງຫລາຍຈະຊອກຫາເຮົາແຕ່ຈະບໍ່ພົບເຮົາ ແລະບ່ອນເຮົາຢູ່ນັ້ນພວກທ່ານຈະເຂົ້າໄປບໍ່
ໄດ້."

[35]ພວກຢິວຈຶ່ງເວົ້າກັນວ່າ, "ຄົນນີ້ຈວນຈະໄປໃສ ທີ່ເຮົາຈະຫາບໍ່ພົບ ເພິ່ນຈະໄປຫາພວກຄົນ
ທີ່ແຕກກະຈັດກະຈາຍໄປຢູ່ຖ້າມກາງຄົນຕ່າງຊາດ ແລະສັ່ງສອນຄົນຕ່າງຊາດນັ້ນຫລື. [36]ຄຳນີ້
ເປັນຢ່າງໃດໜໍທີ່ເພິ່ນກ່າວວ່າ 'ທ່ານທັງຫລາຍຈະຊອກຫາເຮົາແຕ່ຈະບໍ່ພົບເຮົາ ແລະບ່ອນເຮົາຢູ່
ນັ້ນທ່ານຈະເຂົ້າໄປບໍ່ໄດ້'."

## ແມ່ນ້ຳອັນມີຊີວິດ

[37]ໃນວັນສຸດທ້າຍຂອງງານເທດສະການຊຶ່ງເປັນວັນໃຫຍ່ນັ້ນ ພຣະເຢຊູຊົງຢືນແລະຮ້ອງຂຶ້ນ
ວ່າ, "ຖ້າຜູ້ໃດຫິວ ຜູ້ນັ້ນຈົ່ງມາຫາເຮົາ ແລະດື່ມ. [38]ຜູ້ທີ່ວາງໃຈໃນເຮົາແມ່ນ້ຳອັນມີຊີວິດຈະໄຫລ
ອອກຈາກພາຍໃນຜູ້ນັ້ນ ຕາມທີ່ພຣະຄຳພີກ່າວໄວ້ແລ້ວ."[ກ] [39]ສິ່ງທີ່ພຣະເຢຊູຊົງກ່າວນັ້ນໝາຍ

[ກ]ຂໍ້ທີ 37. 38 "ຖ້າຜູ້ໃດຫິວ ຜູ້ນັ້ນຈົ່ງມາຫາເຮົາແລະດື່ມ, ຄືຜູ້ທີ່ວາງໃຈໃນເຮົາ ຕາມທີ່ພຣະຄຳພີໄດ້

ເຖິງ ພຣະວິນຍານ ຊຶ່ງຜູ້ທີ່ວາງໃຈໃນພຣະອົງຈະໄດ້ຮັບ ເຫດວ່າຍັງບໍ່ໄດ້ຊົງປະທານພຣະວິ
ຍານໃຫ້ ເພາະ ພຣະເຢຊູ ຍັງບໍ່ໄດ້ຊົງຮັບສະຫງ່າລາສີ.

## ຄວາມເຫັນແຕກແຍກກັນໃນໝູ່ປະຊາຊົນ

40ເມື່ອປະຊາຊົນໄດ້ຍິນດັ່ງນັ້ນລາງຄົນໄດ້ເວົ້າກັນວ່າ, “ຜູ້ນີ້ເປັນຜູ້ປະກາດພຣະທຳນັ້ນແທ້.”
41ຄົນອື່ນເວົ້າວ່າ, “ຜູ້ນີ້ແຫລະ, ແມ່ນ ພຣະຄຣິດ” ແຕ່ຄົນອື່ນອີກເວົ້າວ່າ, “ພຣະຄຣິດ ຈະມາ
ຈາກ ຄາລີເລ ຫລື. 42ພຣະຄຳພີກ່າວໄວ້ ບໍ່ແມ່ນຫລືວ່າ ພຣະຄຣິດ ຈະມາຈາກເຊື້ອວົງຂອງ ດາວິດ
ແລະມາຈາກບ້ານ ເບັດເລເຮັມ ຊຶ່ງ ດາວິດ ຢູ່ນັ້ນ. 43ເຫດສັນນັ້ນປະຊາຊົນຈຶ່ງມີຄວາມເຫັນ ແຕກ
ແຍກກັນໃນເລື່ອງພຣະອົງ. 44ລາງຄົນໃນໝູ່ເຂົານັ້ນມີໃຈຢາກຈັບພຣະອົງ ແຕ່ບໍ່ມີໃຜຍື່ນມືຈັບ
ເອົາ.

45ເຈົ້າໜ້າທີ່ຈຶ່ງກັບໄປຫາພວກປະໂລຫິດຕົນໃຫຍ່ແລະພວກ ຟາຣີຊາຍ ແລະພວກນັ້ນໄດ້ຖາມ
ເຈົ້າໜ້າທີ່ວ່າ, “ເປັນຫຍັງຈຶ່ງບໍ່ຈັບມັນມາ.” 46ເຈົ້າໜ້າທີ່ຕອບວ່າ, “ບໍ່ເຄີຍມີຜູ້ໃດເວົ້າເໝືອນຄົນ
ນັ້ນຈັກເທື່ອ.” 47ພວກ ຟາຣີຊາຍ ຕອບເຂົາວ່າ, “ພວກເຈົ້າຖືກຊັກຈູງໃຫ້ຫລົງໄປເໝືອນກັນຫລື.
48ມີຄົນໃດແດ່ໃນພວກເຈົ້ານາຍຫລືພວກ ຟາຣີຊາຍ ເຊື່ອຖືຄົນນັ້ນ. 49ແຕ່ປະຊາຊົນໝູ່ນີ້ທີ່ບໍ່ຮູ້ຈັກ
ພຣະບັນຍັດກໍຖືກຊົງປ້ອຍຢູ່ແລ້ວ.”

50ນີໂກເດມ ຜູ້ໄດ້ມາຫາພຣະອົງຄາວກ່ອນນັ້ນແລະເປັນຄົນໜຶ່ງໃນພວກເຂົາ ໄດ້ກ່າວກັບ
ເຂົາວ່າ, 51“ກົດໝາຍຂອງເຮົາບໍ່ຕັດສິນຄົນໃດໂດຍທີ່ຍັງບໍ່ໄດ້ຟັງເຂົາກ່ອນ ແລະຮູ້ວ່າເຂົາໄດ້
ເຮັດອັນໃດແດ່.” 52ເຂົາກໍຕອບ ນີໂກເດມ ວ່າ, “ທ່ານມາຈາກ ຄາລີເລ ເໝືອນກັນຫລືຈຶ່ງຄົ້ນຫາ
ເບິ່ງ ແລ້ວທ່ານຈະເຫັນວ່າບໍ່ມີຜູ້ປະກາດພຣະທຳຈັກຄົນເກີດມາຈາກ ຄາລີເລ.”

53[ແລ້ວຕ່າງຄົນກໍຕ່າງກັນໄປເຮືອນຂອງຕົນ.

# ບົດທີ 8

## ຜູ້ຍິງຄົນໜຶ່ງຖືກຈັບຖານຫລິ້ນຊູ້

1ແຕ່ ພຣະເຢຊູ ໄດ້ສະເດັດໄປຍັງພູໝາກກອກເທດ. 2ເມື່ອຮຸ່ງເຊົ້າພຣະອົງໄດ້ສະເດັດເຂົ້າໄປ
ໃນບໍລິເວນພຣະວິຫານອີກ ພົນລະເມືອງທັງໝົດກໍພາກັນມາຫາພຣະອົງ ພຣະອົງກໍປະທັບນັ່ງ
ຕັ້ງຕົ້ນສັ່ງສອນເຂົາ. 3ພວກນັກທຳແລະພວກ ຟາຣີຊາຍ ໄດ້ພາຜູ້ຍິງຄົນໜຶ່ງມາ ຍິງຄົນນີ້ເຂົາໄດ້
ຈັບໃນຖານຫລິ້ນຊູ້ ແລະເຂົາໄດ້ໃຫ້ຍິງນັ້ນຢືນຢູ່ຖ້າມກາງຝູງຊົນ. 4ເຂົາທູນພຣະອົງວ່າ, “ອາ-
ຈານເອີຍ, ຍິງຄົນນີ້ເຂົາຈັບໄດ້ເມື່ອກຳລັງຫລິ້ນຊູ້ຢູ່. 5ໂມເຊ ໄດ້ສັ່ງໄວ້ໃນພຣະບັນຍັດວ່າ ໃຫ້
ເອົາຫີນຄວ່າງໃສ່ຄົນຢ່າງນີ້ໃຫ້ຕາຍ ສ່ວນທ່ານເດ, ຈະວ່າຢ່າງໃດ.” 6ເຂົາເວົ້າຢ່າງນີ້ເພື່ອທົດ
ລອງ ຫວັງຈະຫາເຫດຟ້ອງພຣະອົງໄດ້ ແຕ່ ພຣະເຢຊູ ຊົງນ້ອມພຣະກາຍລົງໃຊ້ນີ້ວພຣະຫັດຂຽນ
ທີ່ດິນ. 7ເມື່ອເຂົາຍັງຖາມຕໍ່ໄປຢູ່ ພຣະອົງຊົງຢືນຂຶ້ນກ່າວແກ່ເຂົາວ່າ, “ຜູ້ໃດໃນພວກເຈົ້າທີ່ບໍ່ມີ
ຜິດບາບ ກໍໃຫ້ຜູ້ນັ້ນເອົາຫີນຄວ່າງໃສ່ຍິງນີ້ກ່ອນໝູ່.” 8ແລ້ວພຣະອົງກໍຊົງນ້ອມພຣະກາຍລົງຂຽນ

---

ກ່າວໄວ້ແລ້ວວ່າ, ‘ແມ່ນ້ຳອັນມີຊີວິດຈະໄຫລອອກມາຈາກພາຍໃນພຣະອົງ’.”

ທີ່ດິນອີກ.

[9]ແຕ່ເມື່ອເຂົາໄດ້ຍິນດັ່ງນັ້ນກໍອອກໄປເທື່ອລະຄົນຈົນໝົດ ເລີ່ມຕັ້ງແຕ່ຄົນແກ່ໄປ ຍັງເຫລືອຢູ່
ແຕ່ພຣະເຢຊູກັບຍິງຄົນນັ້ນທີ່ຢືນຢູ່ຖ້າມກາງນັ້ນ. [10]ເມື່ອພຣະເຢຊູຊົງເງີຍຂຶ້ນກໍຊົງຖາມຍິງນັ້ນ
ວ່າ, "ນາງເອີຍ, ພວກເຂົາໄປໃສໝົດ ບໍ່ມີໃຜລົງໂທດເຈົ້າຫລື." [11]ນາງທູນຕອບວ່າ, "ບໍ່ມີໃຜ,
ນາຍເອີຍ" ພຣະເຢຊູຊົງກ່າວຕໍ່ນາງວ່າ, "ເຮົາກໍບໍ່ລົງໂທດເຈົ້າເໝືອນກັນ ຈົ່ງໄປເສຍ ຕໍ່ໄປຢ່າ
ເຮັດຜິດອີກ."]

## ພຣະເຢຊູຊົງເປັນຄວາມສະຫວ່າງຂອງໂລກ

[12]ອີກເທື່ອໜຶ່ງພຣະເຢຊູຊົງກ່າວຕໍ່ເຂົາວ່າ, "ເຮົານີ້ແຫລະ, ເປັນຄວາມສະຫວ່າງຂອງໂລກ
ຜູ້ທີ່ຕາມເຮົາມາຈະບໍ່ທ່ຽວໄປໃນທີ່ມືດ ແຕ່ຈະມີຄວາມສະຫວ່າງແຫ່ງຊີວິດ." [13]ແລ້ວພວກຟາຣີ-
ຊາຍກ່າວຕໍ່ພຣະອົງວ່າ, "ທ່ານເປັນພະຍານໃຫ້ແກ່ຕົວທ່ານເອງ ຄຳພະຍານຂອງທ່ານກໍບໍ່ຈິງ."
[14]ພຣະເຢຊູຊົງຕອບເຂົາວ່າ, "ເຖິງວ່າເຮົາເປັນພະຍານໃຫ້ແກ່ຕົວເຮົາເອງ ຄຳພະຍານຂອງເຮົາ
ກໍເປັນຄວາມຈິງ ເພາະເຮົາຮູ້ວ່າເຮົາມາແຕ່ໃສແລະຈະໄປໃສ ແຕ່ຝ່າຍທ່ານທັງຫລາຍກໍບໍ່ຮູ້ວ່າ
ເຮົາມາແຕ່ໃສແລະຈະໄປໃສ. [15]ທ່ານທັງຫລາຍຕັດສິນຕາມທຳມະດາມະນຸດ ຝ່າຍເຮົາກໍບໍ່ຕັດ
ສິນໃຜ. [16]ແຕ່ເຖິງແມ່ນເຮົາຈະຕັດສິນ ການຕັດສິນຂອງເຮົາກໍຖືກ ເພາະເຮົາບໍ່ໄດ້ຕັດສິນໂດຍ
ລຳພັງເຮົາຜູ້ດຽວ ແຕ່ເຮົາຕັດສິນຮ່ວມກັບພຣະບິດາຜູ້ຊົງໃຊ້ເຮົາມາ. [17]ໃນພຣະບັນຍັດຂອງ
ທ່ານທັງຫລາຍມີຄຳຂຽນໄວ້ວ່າ ຄຳພະຍານຂອງສອງຄົນກໍເປັນຄວາມຈິງ. [18]ຝ່າຍເຮົາເປັນພະ-
ຍານໃຫ້ແກ່ຕົວເຮົາເອງແລະພຣະບິດາຜູ້ຊົງໃຊ້ເຮົາມາກໍເປັນພະຍານໃຫ້ແກ່ເຮົາເໝືອນກັນ."

[19]ເຫດສັນນັ້ນເຂົາຈຶ່ງທູນ ພຣະອົງວ່າ, "ພຣະບິດາຂອງທ່ານຢູ່ໃສ" ພຣະເຢຊູຊົງຕອບວ່າ,
"ຕົວເຮົາກໍດີ ພຣະບິດາຂອງເຮົາກໍດີ ທ່ານທັງຫລາຍກໍບໍ່ຮູ້ຈັກ ຖ້າພວກທ່ານຮູ້ຈັກເຮົາກໍຄົງຮູ້ຈັກ
ພຣະບິດາຂອງເຮົາເໝືອນກັນ. [20]ພຣະເຢຊູຊົງກ່າວຄຳເຫລົ່ານີ້ໃນບ່ອນຕັ້ງຕູ້ຖວາຍຊັບ ຂະນະ
ທີ່ຊົງສັ່ງສອນໃນບໍລິເວນພຣະວິຫານ ແຕ່ບໍ່ມີຜູ້ໃດຈັບພຣະອົງເພາະຍັງບໍ່ເຖິງກຳນົດເວລາຂອງ
ພຣະອົງ.

## ພຣະອົງບໍ່ຊົງເປັນຝ່າຍໂລກ

[21]ພຣະອົງຊົງກ່າວກັບເຂົາອີກວ່າ, "ເຮົາຈະຈາກໄປແລະທ່ານທັງຫລາຍຈະຊອກຫາເຮົາ
ແລະຈະຕາຍໃນຄວາມຜິດບາບຂອງທ່ານ ບ່ອນທີ່ເຮົາຈະໄປນັ້ນພວກທ່ານຈະໄປບໍ່ໄດ້." [22]ພວກ
ຢິວຈຶ່ງເວົ້າກັນວ່າ, "ລາວຈະຂ້າຕົວຕາຍເສຍຫລື ເພາະລາວກ່າວວ່າ ບ່ອນທີ່ເຮົາຈະໄປນັ້ນ
ພວກທ່ານໄປບໍ່ໄດ້." [23]ພຣະອົງຊົງກ່າວຕໍ່ເຂົາວ່າ, "ທ່ານທັງຫລາຍເປັນຂອງເບື້ອງລຸ່ມ ຝ່າຍ
ເຮົາເປັນຂອງເບື້ອງເທິງ ພວກທ່ານເປັນຝ່າຍໂລກນີ້ ເຮົາບໍ່ເປັນຝ່າຍໂລກນີ້. [24]ດ້ວຍເຫດນີ້ເຮົາ
ຈຶ່ງບອກທ່ານທັງຫລາຍວ່າ ພວກທ່ານຈະຕາຍໃນຄວາມຜິດບາບຂອງທ່ານ ເພາະວ່າຖ້າທ່ານບໍ່
ໄດ້ເຊື່ອວ່າ ເຮົານີ້ແຫລະ, ເປັນຜູ້ນັ້ນ ພວກທ່ານຈະຕ້ອງຕາຍໃນບາບຂອງຕົນ."

[25]ເຂົາທູນຖາມພຣະອົງວ່າ, "ຝ່າຍທ່ານ ທ່ານແມ່ນໃຜ" ພຣະເຢຊູຊົງຕອບວ່າ, "ເຮົາເປັນ
ເໝືອນທີ່ເຮົາໄດ້ບອກພວກທ່ານຕັ້ງແຕ່ຕົ້ນນັ້ນ.[ກ] [26]ເຮົາມີຂໍ້ຄວາມຫລາຍປະການທີ່ຈະກ່າວແລະ

[ກ]ຫລືວ່າ ພຣະເຢຊູຊົງຕອບວ່າ, "ເປັນສັນໃດເຮົາຈຶ່ງເວົ້ານຳພວກທ່ານ."

ຕັດສິນພວກທ່ານ ແຕ່ພຣະອົງຜູ້ຊົງໃຊ້ເຮົາມານັ້ນຊົງເປັນສັດຈິງ ແລະສິ່ງທີ່ເຮົາໄດ້ຍິນຈາກ
ພຣະອົງນັ້ນແຫລະ, ເຮົາກໍກ່າວແກ່ໂລກ.” 27ເຂົາບໍ່ໄດ້ເຂົ້າໃຈວ່າພຣະອົງຊົງກ່າວກັບເຂົາເຖິງ
ເລື່ອງພຣະບິດາ.

28ດັ່ງນັ້ນ ພຣະເຢຊູຈຶ່ງຊົງກ່າວແກ່ເຂົາວ່າ, “ເມື່ອທ່ານທັງຫລາຍຈະໄດ້ຍົກບຸດມະນຸດຂຶ້ນ
ແລ້ວ ເມື່ອນັ້ນພວກທ່ານຈະຮູ້ວ່າ ເຮົານີ້ແຫລະ, ຄືຜູ້ນັ້ນ ແລະຮູ້ວ່າເຮົາບໍ່ໄດ້ເຮັດສິ່ງໃດຕາມໃຈ
ຊອບ ແຕ່ພຣະບິດາໄດ້ຊົງສອນເຮົາຢ່າງໃດ ເຮົາຈຶ່ງກ່າວຢ່າງນັ້ນ. 29ພຣະອົງຜູ້ຊົງໃຊ້ເຮົາມາກໍ
ຊົງສະຖິດຢູ່ກັບເຮົາ ພຣະອົງບໍ່ໄດ້ຊົງປະເຮົາໄວ້ໃຫ້ຢູ່ຜູ້ດຽວ ເພາະວ່າເຮົາເຮັດຕາມຊອບພຣະ-
ໄທຂອງພຣະອົງຢູ່ສະເໝີ.” 30ເມື່ອພຣະອົງຊົງກ່າວຄຳເຫລົ່ານັ້ນມີຫລາຍຄົນໄດ້ເຊື່ອໃນພຣະອົງ.

## ຄວາມຈິງຈະເຮັດໃຫ້ເປັນອິດສະຫລະ

31ພຣະເຢຊູຊົງກ່າວຕໍ່ພວກຢິວທີ່ເຊື່ອຖືໃນພຣະອົງວ່າ, “ຖ້າທ່ານທັງຫລາຍຕັ້ງໝັ້ນຄົງຢູ່ໃນ
ຖ້ອຍຄຳຂອງເຮົາ ພວກທ່ານກໍເປັນສາວົກແທ້ຂອງເຮົາ. 32ແລ້ວພວກທ່ານຈະຮູ້ຈັກຄວາມຈິງ
ແລະຄວາມຈິງນັ້ນຈະເຮັດໃຫ້ພວກທ່ານເປັນອິດສະຫລະ.” 33ເຂົາທູນຕອບພຣະອົງວ່າ, “ພວກ
ເຮົາເປັນເຊື້ອສາຍຂອງອັບຣາຮາມ ແລະບໍ່ໄດ້ເປັນຂ້ອຍຂ້າຂອງຜູ້ໃດຈັກເທື່ອ ເປັນຫຍັງທ່ານ
ຈຶ່ງເວົ້າວ່າ, ‘ພວກທ່ານຈະເປັນອິດສະຫລະ.’” 34ພຣະເຢຊູຊົງຕອບເຂົາວ່າ, “ເຮົາບອກທ່ານ
ທັງຫລາຍຕາມຄວາມຈິງວ່າ ທຸກຄົນທີ່ເຄີຍເຮັດການຜິດບາບກໍເປັນຂ້ອຍຂ້າຂອງຄວາມບາບ.
35ຂ້ອຍຂ້າບໍ່ຕັ້ງຢູ່ໃນຄົວເຮືອນຕະຫລອດໄປ ແຕ່ບຸດກໍຕັ້ງຢູ່ຕະຫລອດໄປ. 36ເຫດສັນນັ້ນ, ຖ້າ
ພຣະບຸດຈະເຮັດໃຫ້ທ່ານທັງຫລາຍເປັນອິດສະຫລະ ພວກທ່ານກໍຈະເປັນອິດສະຫລະແທ້ຈິງ.
37ເຮົາຮູ້ຢູ່ວ່າທ່ານທັງຫລາຍເປັນເຊື້ອສາຍຂອງທ່ານອັບຣາຮາມ ແຕ່ພວກທ່ານຊອກຫາຈະຂ້າ
ເຮົາເສຍ ເພາະວ່າຄຳສອນຂອງເຮົາບໍ່ເຂົ້າສູ່ໃຈຂອງພວກທ່ານ. 38ເຮົາເວົ້າເຖິງສິ່ງທີ່ເຮົາໄດ້ເຫັນ
ເມື່ອຢູ່ກັບພຣະບິດາຂອງເຮົາ ຝ່າຍພວກທ່ານໄດ້ເຮັດຕາມສິ່ງທີ່ທ່ານໄດ້ຍິນຈາກພໍ່ຂອງທ່ານ.”

## ພໍ່ຂອງທ່ານຄືມານ

39ເຂົາທູນຕອບພຣະອົງວ່າ, “ອັບຣາຮາມເປັນພໍ່ຂອງພວກເຮົາ” ພຣະເຢຊູຊົງກ່າວກັບເຂົາ
ວ່າ, “ຖ້າທ່ານທັງຫລາຍເປັນລູກຂອງອັບຣາຮາມແລ້ວ ທ່ານກໍຈະເຮັດສິ່ງທີ່ອັບຣາຮາມໄດ້
ເຮັດ. 40ແຕ່ບັດນີ້ທ່ານທັງຫລາຍຫາໂອກາດຈະຂ້າເຮົາ ຜູ້ໄດ້ບອກເຖິງຄວາມຈິງທີ່ເຮົາໄດ້ຍິນມາ
ຈາກພຣະເຈົ້າ ການຢ່າງນີ້ອັບຣາຮາມບໍ່ໄດ້ເຮັດ. 41ທ່ານທັງຫລາຍເຮັດຕາມສິ່ງທີ່ພໍ່ຂອງພວກ
ທ່ານເຮັດ” ເຂົາຈຶ່ງທູນຕອບວ່າ, “ພວກເຮົາບໍ່ໄດ້ເກີດມາຈາກການຫລິ້ນຊູ້ ພວກເຮົາມີບິດາອົງ
ດຽວຄືພຣະເຈົ້າ.”

42ພຣະເຢຊູຊົງກ່າວຕໍ່ເຂົາວ່າ, “ຖ້າພຣະເຈົ້າເປັນພຣະບິດາຂອງພວກທ່ານແລ້ວ ທ່ານກໍຈະ
ຮັກເຮົາເພາະເຮົາມາຈາກພຣະເຈົ້າ ແລະມາເຖິງທີ່ນີ້ ເຮົາບໍ່ໄດ້ມາຕາມໃຈຊອບຂອງເຮົາເອງ ແຕ່
ພຣະອົງໄດ້ຊົງໃຊ້ເຮົາມາ. 43ເຫດສັນໃດພວກທ່ານຈຶ່ງບໍ່ເຂົ້າໃຈຄຳເວົ້າຂອງເຮົາ ນັ້ນເປັນເພາະ
ພວກທ່ານທົນຟັງຖ້ອຍຄຳຂອງເຮົາບໍ່ໄດ້. 44ທ່ານທັງຫລາຍມາຈາກພໍ່ຂອງທ່ານຄືມານ, ພວກ
ທ່ານມີໃຈຢາກເຮັດຕາມຄວາມປາດຖະໜາຂອງພໍ່ທ່ານ ມັນເປັນຜູ້ຂ້າຄົນຕັ້ງແຕ່ເດີມມາແລ້ວ
ແລະບໍ່ໄດ້ຕັ້ງຢູ່ໃນຄວາມຈິງ ເພາະໃນຕົວມັນບໍ່ມີຄວາມຈິງ ເມື່ອມັນເວົ້າຕົວະມັນກໍເວົ້າຕາມສັນ-

ດານຂອງມັນເອງ ເພາະເປັນຜູ້ຕົວະແລະເປັນພໍ່ຂອງການຕົວະ. 45ແຕ່ທ່ານທັງຫລາຍບໍ່ໄດ້ເຊື່ອ
ເຮົາ ເພາະຝ່າຍເຮົາກໍກ່າວຄວາມຈິງ 46ໃນພວກທ່ານມີຜູ້ໃດແດ່ທີ່ຢືນຢັນໄດ້ວ່າ ເຮົາໄດ້ເຮັດຜິດ
ຖ້າເຮົາເວົ້າຄວາມຈິງ ເປັນຫຍັງທ່ານຈຶ່ງບໍ່ເຊື່ອເຮົາ. 47ຜູ້ທີ່ມາຈາກພຣະເຈົ້າກໍຍອມຟັງພຣະທຳ
ຂອງພຣະເຈົ້າ ທ່ານທັງຫລາຍບໍ່ໄດ້ມາຈາກພຣະເຈົ້າ ເຫດສັນນັ້ນພວກທ່ານຈຶ່ງບໍ່ຟັງ."

## ພຣະເຢຊູຊົງເປັນຢູ່ກ່ອນອັບຣາຮາມ

48ພວກຢິວທູນຕອບພຣະອົງວ່າ, "ທີ່ພວກເຮົາເວົ້າວ່າ ຕົວເປັນໄທຊາມາເຣຍ ແລະມີຜີຮ້າຍ
ສິງຢູ່ນັ້ນ ບໍ່ຈິງຫລື." 49ພຣະເຢຊູຊົງຕອບເຂົາວ່າ, "ເຮົາບໍ່ມີຜີສິງ ແຕ່ເຮົາຖວາຍພຣະກຽດແດ່
ພຣະບິດາຂອງເຮົາ ແຕ່ຝ່າຍພວກທ່ານໝິ່ນປະໝາດເຮົາ. 50ສ່ວນເຮົາບໍ່ໄດ້ຊອກຫາກຽດສຳລັບ
ເຮົາເອງ ແຕ່ມີຜູ້ຫາໃຫ້ ແລະພຣະອົງນັ້ນກໍຊົງພິພາກສາ. 51ເຮົາບອກພວກທ່ານຕາມຄວາມຈິງ
ວ່າ ຖ້າຜູ້ໃດຖືຮັກສາຄຳສອນຂອງເຮົາ ຜູ້ນັ້ນຈະບໍ່ເຫັນຄວາມຕາຍຈັກເທື່ອ."

52ພວກຢິວທູນພຣະອົງວ່າ, "ດຽວນີ້ເຮົາຮູ້ແລ້ວວ່າຕົວມີຜີສິງຢູ່ ອັບຣາຮາມກໍຕາຍໄປແລ້ວ
ແລະພວກປະກາດພຣະທຳກໍຕາຍໄປແລ້ວເໝືອນກັນ ແລະຕົວເວົ້າວ່າ 'ຖ້າຜູ້ໃດຖືຮັກສາຄຳ
ສອນຂອງເຮົາຈະບໍ່ຮູ້ລົດຄວາມຕາຍຈັກເທື່ອ.' 53ຕົວໃຫຍ່ກວ່າອັບຣາຮາມບິດາຂອງພວກເຮົາ
ຜູ້ຕາຍໄປແລ້ວນັ້ນຫລື ພວກຜູ້ປະກາດພຣະທຳກໍຕາຍໄປແລ້ວເໝືອນກັນ ຕົວອວດອ້າງວ່າຕົວ
ເປັນຜູ້ໃດອີກ." 54ພຣະເຢຊູຊົງຕອບວ່າ, "ຖ້າເຮົາໃຫ້ກຽດແກ່ຕົວເຮົາເອງ ກຽດຂອງເຮົາກໍບໍ່ມີ
ຄວາມໝາຍ ພຣະອົງຜູ້ຊົງໃຫ້ກຽດແກ່ເຮົານັ້ນຄືພຣະບິດາຂອງເຮົາ ຜູ້ຊຶ່ງພວກທ່ານກ່າວວ່າ
ຊົງເປັນພຣະເຈົ້າຂອງພວກທ່ານ. 55ພວກທ່ານຍັງບໍ່ຮູ້ຈັກພຣະອົງ ແຕ່ຝ່າຍເຮົາ, ເຮົາຮູ້ຈັກ
ພຣະອົງ ຖ້າເຮົາເວົ້າວ່າເຮົາບໍ່ຮູ້ຈັກພຣະອົງ ເຮົາກໍເປັນຄົນຕົວະເໝືອນພວກທ່ານ ແຕ່ເຮົາຮູ້ຈັກ
ພຣະອົງແລະຖືຮັກສາພຣະທຳຂອງພຣະອົງ. 56ອັບຣາຮາມ ພໍ່ຂອງພວກທ່ານ ມີຄວາມຊົມຊື່ນ-
ຍິນດີຈະໄດ້ເຫັນວັນຂອງເຮົາ ເພິ່ນໄດ້ເຫັນແລ້ວແລະຊົມຊື່ນຍິນດີ."

57ພວກຢິວທູນພຣະອົງວ່າ, "ອາຍຸຕົວຍັງບໍ່ເຖິງຫ້າສິບປີ ຕົວໄດ້ເຫັນອັບຣາຮາມແລ້ວຫລື."
58ພຣະເຢຊູຊົງຕອບເຂົາວ່າ, "ເຮົາບອກພວກທ່ານຕາມຄວາມຈິງວ່າ ກ່ອນອັບຣາຮາມເກີດ
ເຮົານີ້ກໍເປັນຢູ່ແລ້ວ." 59ເຫດສັນນັ້ນເຂົາຈຶ່ງຈັບກ້ອນຫີນຈະຄວ່າງໃສ່ພຣະອົງ ແຕ່ພຣະເຢຊູຖືກ
ຊົງບັງໄວ້ ແລ້ວສະເດັດອອກຈາກບໍລິເວນພຣະວິຫານ.

# ບົດທີ 9

## ພຣະເຢຊູຊົງໂຜດຄົນໜຶ່ງຊຶ່ງຕາບອດແຕ່ກຳເນີດ

1ເມື່ອພຣະເຢຊູກຳລັງສະເດັດໄປຊົງເຫັນຊາຍຄົນໜຶ່ງຕາບອດແຕ່ກຳເນີດ. 2ພວກສາວົກ
ຂອງພຣະອົງທູນຖາມພຣະອົງວ່າ, "ອາຈານເຈົ້າຂ້າເອີຍ, ຜູ້ໃດໄດ້ເຮັດຜິດບາບຄົນນີ້ຫລືພໍ່ແມ່
ຂອງຕົນ ລາວຈຶ່ງເກີດມາຕາບອດ." 3ພຣະເຢຊູຊົງຕອບວ່າ, "ບໍ່ແມ່ນຄົນນີ້ຫລືພໍ່ແມ່ຂອງຕົນໄດ້
ເຮັດບາບ ແຕ່ເກີດມາເພື່ອໃຫ້ພຣະລາຊະກິດຂອງພຣະເຈົ້າປະກົດໃນຕົວຄົນນີ້. 4ເມື່ອຍັງເວັນຢູ່
ເຮົາທັງຫລາຍຕ້ອງເຮັດພຣະລາຊະກິດຂອງພຣະອົງຜູ້ຊົງໃຊ້ເຮົາມາ ເວລາກາງຄືນກໍຈະໄດ້ມາ
ເຖິງ ຄືເວລາທີ່ບໍ່ມີຜູ້ໃດອາດເຮັດການໄດ້. 5ຕາບໃດເຮົາຍັງຢູ່ໃນໂລກເຮົາກໍເປັນຄວາມສະ-

ຫວ່າງຂອງໂລກ.” 6ເມື່ອຊົງກ່າວດັ່ງນັ້ນແລ້ວ ພຣະອົງຊົງຖົ່ມນໍ້າລາຍລົງດິນ ແລະຊົງເຮັດໃຫ້
ດິນເປັນຕົມດ້ວຍນໍ້າລາຍນັ້ນ ແລ້ວຊົງເອົາຕົມນັ້ນທາຕາຂອງຄົນຕາບອດ, 7ກັບທັງຊົງກ່າວຕໍ່
ຄົນນັ້ນວ່າ, “ຈົ່ງໄປລ້າງເສຍທີ່ສະຊີໂລອາມ” (ຊຶ່ງແປວ່າ ໃຊ້ໄປ) ລາວຈຶ່ງໄປລ້າງແລ້ວກັບມາ
ກໍເຫັນຮຸ່ງໄດ້.

8ເຫດສັນນັ້ນພວກຄົນໃກ້ຄຽງ ແລະຄົນທີ່ເຄີຍເຫັນລາວເປັນຄົນຂໍທານຢູ່ແຕ່ກ່ອນ ຈຶ່ງເວົ້າກັນ
ວ່າ, “ຜູ້ນີ້ບໍ່ແມ່ນຄົນທີ່ເຄີຍນັ່ງຂໍທານນັ້ນຫລື.” 9ບາງຄົນຕອບວ່າ, “ແມ່ນຄົນນັ້ນແຫລະ” ແຕ່
ຄົນອື່ນກໍວ່າ, “ບໍ່ແມ່ນແຕ່ລາວເໝືອນຄົນນັ້ນ” ສ່ວນຄົນນັ້ນເອງກໍບອກວ່າ,” ເຮົານີ້ແມ່ນຄົນນັ້ນ
ແຫລະ.” 10ເຂົາຈຶ່ງຖາມລາວວ່າ, “ເປັນຢ່າງໃດຕາຂອງເຈົ້າຈຶ່ງມືນອອກໄດ້.” 11ຄົນນັ້ນໄດ້ຕອບ
ວ່າ, “ຊາຍຄົນໜຶ່ງຊື່ວ່າເຢຊູໄດ້ເຮັດຂີ້ຕົມທາຕາຂອງເຮົາ ແລ້ວບອກເຮົາວ່າ ‘ຈົ່ງໄປລ້າງທີ່ສະ
ຊີໂລອາມ’ ເຮົາຈຶ່ງໄປລ້າງແລ້ວກໍໄດ້ເຫັນຮຸ່ງມາ.” 12ເຂົາຈຶ່ງຖາມວ່າ, “ຜູ້ນັ້ນຢູ່ໃສ” ລາວຕອບ
ວ່າ, “ເຮົາບໍ່ຮູ້.”

## ພວກຟາຣີຊາຍສອບຖາມເລື່ອງການຊົງໂຜດຄົນຕາບອດ

13ເຂົາຈຶ່ງພາຄົນທີ່ຕາບອດແຕ່ກ່ອນນັ້ນໄປຫາພວກຟາຣີຊາຍ. 14ອັນໜຶ່ງ, ວັນທີ່ພຣະເຢຊູ
ຊົງເຮັດຕົມປົດຕາຄົນນີ້ແມ່ນວັນຊະບາໂຕ. 15ເຫດສັນນັ້ນພວກຟາຣີຊາຍຈຶ່ງໄດ້ຖາມຜູ້ນັ້ນ
ເໝືອນກັນວ່າ ເຮັດແນວໃດຕົນຈຶ່ງເຫັນຮຸ່ງໄດ້ ສ່ວນຜູ້ນັ້ນໄດ້ບອກເຂົາວ່າ, “ເພິ່ນໄດ້ເອົາຂີ້ຕົມ
ທາຕາຂອງຂ້ານ້ອຍ ແລ້ວຂ້ານ້ອຍໄດ້ໄປລ້າງຈຶ່ງເຫັນຮຸ່ງໄດ້.”

16ເຫດສັນນັ້ນພວກຟາຣີຊາຍລາງຄົນເວົ້າວ່າ, “ຄົນນັ້ນບໍ່ໄດ້ມາຈາກພຣະເຈົ້າ ເພາະເພິ່ນບໍ່ຖື
ຮັກສາວັນຊະບາໂຕ” ແຕ່ຄົນອື່ນເວົ້າວ່າ, “ຄົນບາບຈະເຮັດໝາຍສຳຄັນແນວນີ້ໄດ້ຢ່າງໃດ”
ແລະເຂົາກໍແຕກແຍກບໍ່ຖືກຕ້ອງກັນ. 17ເຂົາຈຶ່ງຖາມຄົນຕາບອດອີກວ່າ, “ເຈົ້າເດ, ເຈົ້າເວົ້າ
ຢ່າງໃດເລື່ອງຄົນນັ້ນໃນການທີ່ເພິ່ນໄດ້ປົດຕາຂອງເຈົ້າ” ຜູ້ນັ້ນຕອບວ່າ, “ທ່ານເປັນຜູ້ປະກາດ
ພຣະທຳ.”

18ຝ່າຍພວກຢິວບໍ່ເຊື່ອວ່າ ຊາຍຄົນນັ້ນເປັນຕາບອດແລະກັບເຫັນຮຸ່ງໄດ້ ຈົນເຂົາໄດ້ເອີ້ນພໍ່
ແມ່ຂອງຜູ້ນັ້ນມາ, 19ແລ້ວຖາມວ່າ, “ຊາຍຄົນນີ້ເປັນລູກຂອງໝູ່ເຈົ້າຫລື ທີ່ໝູ່ເຈົ້າເວົ້າວ່າເປັນຕາ
ບອດແຕ່ກຳເນີດມາ ເປັນຢ່າງໃດດຽວນີ້ລາວຈຶ່ງເຫັນໄດ້.” 20ພໍ່ແມ່ຂອງຜູ້ນັ້ນຕອບວ່າ, “ພວກ
ຂ້ານ້ອຍຮູ້ວ່າຜູ້ນີ້ເປັນລູກຂອງຂ້ານ້ອຍແລະຮູ້ວ່າລາວເປັນຕາບອດແຕ່ກຳເນີດ. 21ແຕ່ທີ່ລາວ
ເຫັນຮຸ່ງໄດ້ດຽວນີ້ນັ້ນ ພວກຂ້ານ້ອຍກໍບໍ່ຮູ້ແລະບໍ່ຮູ້ວ່າແມ່ນຜູ້ໃດໄດ້ປົດຕາຂອງລາວ ຈົ່ງຖາມ
ລາວເອງ ອາຍຸລາວກໍພົ້ນກະສຽນແລ້ວ ລາວຄົງເວົ້າເລື່ອງຕົນເອງໄດ້.” 22ທີ່ພໍ່ແມ່ຂອງຜູ້ນັ້ນເວົ້າ
ດັ່ງນີ້ກໍເພາະເຂົາຢ້ານພວກຢິວ ດ້ວຍວ່າພວກຢິວຕົກລົງກັນແລ້ວວ່າ ຖ້າຜູ້ໃດຍອມຮັບຜູ້ນັ້ນ
ເປັນພຣະຄຣິດ ຈະຕ້ອງຖືກໄລ່ອອກຈາກໂຮງທຳມະເທດສະໜາ. 23ເພາະສັນນັ້ນພໍ່ແມ່ຂອງ
ລາວຈຶ່ງເວົ້າວ່າ, “ຈົ່ງຖາມລາວເອງເພາະອາຍຸລາວກໍພົ້ນກະສຽນແລ້ວ.”

24ເຫດສັນນັ້ນເຂົາຈຶ່ງເອີ້ນຄົນທີ່ໄດ້ເປັນຕາບອດ ນັ້ນມາເປັນເທື່ອທີສອງ ແລະບອກລາວວ່າ,
“ຈົ່ງສັນລະເສີນພຣະເຈົ້າ[ກ] ພວກເຮົາຮູ້ຢູ່ວ່າຊາຍຄົນນັ້ນເປັນຄົນບາບ.” 25ລາວຕອບວ່າ, “ເພິ່ນ

---

[ກ]ໝາຍຄວາມວ່າ “ຈົ່ງເວົ້າໄປຕາມຄວາມຈິງ” (ເບິ່ງ ຢຣຊ 7:19).

ເປັນຄົນບາບຫລືບໍ່ເປັນຂ້ານ້ອຍກໍບໍ່ຮູ້ ຂ້ານ້ອຍຮູ້ແຕ່ສິ່ງດຽວວ່າ ຄືແຕ່ກ່ອນຂ້ານ້ອຍເປັນຕາບອດ
ແຕ່ດຽວນີ້ຂ້ານ້ອຍເຫັນໄດ້ແລ້ວ.” 26ເຂົາຈຶ່ງຖາມລາວອີກວ່າ, “ຜູ້ນັ້ນໄດ້ເຮັດຢ່າງໃດໃຫ້ເຈົ້າແດ່
ແລະໄດ້ປົດຕາຂອງເຈົ້າຢ່າງໃດ.” 27ຊາຍຄົນນັ້ນຕອບວ່າ, “ຂ້ານ້ອຍໄດ້ບອກພວກທ່ານແລ້ວ
ແລະທ່ານບໍ່ຟັງ ເປັນຫຍັງພວກທ່ານຈຶ່ງມີໃຈຢາກຟັງອີກ ຢາກເປັນສິດຂອງເພິ່ນເໝືອນກັນຫລື.”
28ເຂົາຈຶ່ງເຍີ້ຍຄົນນັ້ນວ່າ, “ມຶງນັ້ນແຫລະ, ເປັນສິດຂອງມັນ ແຕ່ພວກເຮົານີ້ເປັນສິດຂອງໂມ-
ເຊ. 29ຝ່າຍພວກເຮົາຮູ້ຢູ່ວ່າພຣະເຈົ້າໄດ້ຊົງກ່າວຕໍ່ໂມເຊ ແຕ່ຄົນນັ້ນພວກເຮົາບໍ່ຮູ້ວ່າມັນມາແຕ່
ໃສ.” 30ຊາຍນັ້ນຕອບເຂົາວ່າ, “ນີ້ກໍເປັນໜ້າປະຫລາດແທ້ ທີ່ພວກທ່ານບໍ່ຮູ້ວ່າທ່ານຜູ້ນັ້ນມາແຕ່
ໃສ, ແຕ່ເພິ່ນຍັງໄດ້ປົດຕາຂອງຂ້ານ້ອຍ. 31ພວກເຮົາຮູ້ຢູ່ວ່າພຣະເຈົ້າບໍ່ຊົງຟັງຄົນບາບ ແຕ່ຖ້າ
ຜູ້ໃດຢຳເກງພຣະເຈົ້າ ແລະເຮັດໄປຕາມນ້ຳພຣະໄທຂອງພຣະອົງ ພຣະອົງກໍຊົງຟັງຜູ້ນັ້ນ.
32ຕັ້ງແຕ່ເດີມມີໂລກມາ ບໍ່ທ່ອນໄດ້ຍິນວ່າ ມີຜູ້ໃດໄດ້ປົດຕາຂອງຄົນທີ່ເປັນຕາບອດແຕ່ກຳເນີດ
ໄດ້. 33ຖ້າທ່ານຜູ້ນັ້ນບໍ່ໄດ້ມາຈາກພຣະເຈົ້າແລ້ວ ກໍບໍ່ສາມາດຈະເຮັດສິ່ງໃດໄດ້.” 34ເຂົາໄດ້
ກ່າວຕອບຄົນນັ້ນວ່າ, “ມຶງເກີດມາໃນການບາບທັງນັ້ນ ແລະມຶງຈະມາສອນພວກເຮົາຫລື” ແລ້ວ
ເຂົາຈຶ່ງໄລ່ຄົນນັ້ນອອກເສຍ.

## ອາການບອດຝ່າຍວິນຍານຈິດ

35ພຣະເຢຊູຊົງໄດ້ຍິນວ່າເຂົາໄດ້ໄລ່ຄົນນັ້ນອອກແລ້ວ ແລະເມື່ອພຣະອົງຊົງພົບລາວຈຶ່ງຊົງ
ຖາມລາວວ່າ, “ເຈົ້າໄວ້ວາງໃຈໃນບຸດມະນຸດຫລື.” 36ຊາຍຄົນນັ້ນທູນຕອບພຣະອົງວ່າ, “ນາຍ
ເອີຍ, ບຸດມະນຸດນັ້ນຄືຜູ້ໃດ ເພື່ອຂ້ານ້ອຍຈະວາງໃຈໃນເພິ່ນ.” 37ພຣະເຢຊູຊົງກ່າວກັບລາວວ່າ,
“ເຈົ້າໄດ້ເຫັນເພິ່ນແລ້ວ ຄືຜູ້ນັ້ນແຫລະ, ທີ່ກຳລັງເວົ້າຢູ່ກັບເຈົ້າ.” 38ລາວຈຶ່ງທູນວ່າ, “ນາຍເຈົ້າ
ເອີຍ, ຂ້ານ້ອຍວາງໃຈເຊື່ອແລ້ວ” ລາວຈຶ່ງຂາບລົງໄຫວ້ພຣະອົງ. 39ພຣະເຢຊູຊົງກ່າວວ່າ,
“ເຮົາໄດ້ມາໃນໂລກນີ້ສຳລັບການພິພາກສາ ເພື່ອຄົນທັງຫລາຍທີ່ບໍ່ເຫັນຈະໄດ້ເຫັນ ແລະເພື່ອ
ຄົນທັງຫລາຍທີ່ເຫັນແລ້ວຈະກາຍເປັນຕາບອດ.”
40ແລະເມື່ອພວກຟາຣີຊາຍບາງຄົນທີ່ຢູ່ໃກ້ພຣະອົງໄດ້ຍິນດັ່ງນັ້ນ ຈຶ່ງທູນຖາມວ່າ, “ຝ່າຍ
ພວກເຮົາເດ, ກໍເປັນຕາບອດເໝືອນກັນຫລື.” 41ພຣະເຢຊູຊົງຕອບເຂົາວ່າ, “ຖ້າພວກທ່ານເປັນ
ຄົນຕາບອດພວກທ່ານຈະບໍ່ມີຄວາມຜິດບາບ ແຕ່ບັດນີ້ພວກທ່ານເວົ້າວ່າ ‘ເຮົາເຫັນຢູ່’ ເຫດສັນ-
ນັ້ນຄວາມຜິດບາບຂອງພວກທ່ານຈຶ່ງຍັງມີຢູ່.”

# ບົດທີ 10

## ຄຳອຸປະມາເລື່ອງຄອກແກະ

1“ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຜູ້ທີ່ບໍ່ໄດ້ເຂົ້າໄປໃນຄອກແກະທາງປະຕູ ແຕ່
ປີນເຂົ້າໄປທາງອື່ນ ຜູ້ນັ້ນກໍເປັນຂະໂມຍແລະໂຈນ. 2ແຕ່ຜູ້ທີ່ເຂົ້າທາງປະຕູກໍເປັນຜູ້ລ້ຽງແກະ.
3ນາຍປະຕູກໍໄຂປະຕູໃຫ້ແກ່ຜູ້ນັ້ນ ແລະຝູງແກະກໍຍອມຟັງສຽງຂອງເພິ່ນ ແລະເພິ່ນເອີ້ນແກະ
ຂອງຕົນຕາມຊື່ແລະພາເຂົາອອກໄປ. 4ເມື່ອເພິ່ນໃຫ້ແກະຂອງຕົນອອກໄປໝົດແລ້ວ ເພິ່ນກໍນຳ
ໜ້າເຂົາໄປ ແລະຝູງແກະກໍຕາມເພິ່ນໄປເພາະເຂົາຮູ້ຈັກສຽງຂອງເພິ່ນ. 5ສ່ວນຄົນຕ່າງໜ້າ, ຝູງ

ແກະຈະບໍ່ຕາມໄປ ມີແຕ່ຈະໜີຈາກຄົນນັ້ນເພາະເຂົາບໍ່ຮູ້ຈັກສຽງຂອງຄົນຕ່າງໜ້ານັ້ນ." 6ຄຳ
ປຽບທຽບນີ້ພຣະເຢຊູຊົງກ່າວຕໍ່ເຂົາ ແຕ່ເຂົາບໍ່ໄດ້ເຂົ້າໃຈວ່າ ຄຳທີ່ພຣະອົງຊົງກ່າວນັ້ນມີຄວາມ
ໝາຍຢ່າງໃດ.

## ພຣະເຢຊູຊົງເປັນຜູ້ລ້ຽງທີ່ດີ

7ພຣະເຢຊູຊົງກ່າວອີກວ່າ, "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ເຮົານີ້ແຫລະ, ເປັນ
ປະຕູຂອງແກະທັງຫລາຍ. 8ບັນດາຜູ້ທີ່ມາກ່ອນເຮົານັ້ນກໍເປັນຂະໂມຍແລະໂຈນ ແຕ່ຝູງແກະບໍ່
ໄດ້ຟັງເຂົາ. 9ເຮົານີ້ແຫລະ, ເປັນປະຕູ ຖ້າຜູ້ໃດເຂົ້າທາງເຮົາຜູ້ນັ້ນຈະພົ້ນ ແລ້ວຈະເຂົ້າອອກທັງ
ຈະພົບອາຫານ. 10ຂະໂມຍມາກໍພຽງແຕ່ຈະລັກ, ຈະຂ້າ, ແລະທຳລາຍເທົ່ານັ້ນ ຝ່າຍເຮົາໄດ້ມາ
ເພື່ອເຂົາຈະໄດ້ຊີວິດ ແລະຈະໄດ້ຢ່າງຄົບບໍລິບູນ.

11ເຮົານີ້ແຫລະ, ເປັນຜູ້ລ້ຽງແກະທີ່ດີ ຜູ້ລ້ຽງທີ່ດີນັ້ນຍ່ອມສະຫລະຊີວິດຂອງຕົນເພື່ອຝູງແກະ.
12ຜູ້ທີ່ຮັບຈ້າງບໍ່ເປັນຜູ້ລ້ຽງແກະແລະຝູງແກະບໍ່ແມ່ນຂອງຕົນ ເມື່ອເຫັນໝາໄນມາຜູ້ນັ້ນກໍປະຖິ້ມ
ຝູງແກະປົບໜີໄປ ໝາໄນກໍຄາບຍາດເອົາແກະໄປເສຍ ແລະເຮັດໃຫ້ຝູງແກະແຕກຊະກັນໄປ.
13ຄົນນັ້ນໜີກໍເພາະເປັນຜູ້ຮັບຈ້າງ ແລະບໍ່ເປັນຫ່ວງນຳຝູງແກະ.

14ເຮົານີ້ແຫລະ, ເປັນຜູ້ລ້ຽງທີ່ດີ ເຮົາຮູ້ຈັກແກະຂອງເຮົາ ແລະແກະຂອງເຮົາກໍຮູ້ຈັກເຮົາ,
15ເໝືອນດັ່ງພຣະບິດາຊົງຮູ້ຈັກເຮົາ ແລະເຮົາຮູ້ຈັກພຣະບິດາ ແລະຊີວິດຂອງເຮົາ ເຮົາກໍສະ-
ຫລະເພື່ອແກະ. 16ແກະອື່ນອີກທີ່ບໍ່ແມ່ນແຕ່ຄອກນີ້ເຮົາກໍມີຢູ່ ແກະເຫລົ່ານັ້ນເຮົາຕ້ອງພາມາ
ເໝືອນກັນ ແລະເຂົາຈະຟັງສຽງຂອງເຮົາ ແລ້ວຈະຮ່ວມເປັນຝູງດຽວ ແລະມີຜູ້ລ້ຽງພຽງຜູ້ດຽວ.
17ດ້ວຍເຫດນີ້ພຣະບິດາຈຶ່ງຊົງຮັກເຮົາ ເພາະເຮົາສະຫລະຊີວິດຂອງເຮົາເພື່ອຈະຮັບຊີວິດນັ້ນຄືນ
ອີກ. 18ບໍ່ມີຜູ້ໃດຍາດເອົາຊີວິດໄປຈາກເຮົາ ແຕ່ເຮົາສະຫລະຊີວິດດ້ວຍໃຈສະໝັກຂອງເຮົາເອງ
ເຮົາມີສິດທີ່ຈະສະຫລະຊີວິດນັ້ນແລະມີສິດທີ່ຈະຮັບຄືນອີກ ຄຳສັ່ງນີ້ເຮົາໄດ້ຮັບຈາກພຣະບິດາ
ຂອງເຮົາ."

19ເພາະດ້ວຍຂໍ້ຄວາມນີ້ພວກຢິວຈຶ່ງເກີດແຕກແຍກບໍ່ຖືກຕ້ອງກັນອີກ. 20ມີຫລາຍຄົນໃນພວກ
ນັ້ນເວົ້າວ່າ, "ມັນມີຜີສິງຢູ່ແລະເປັນບ້າແລ້ວ ຟັງມັນເຮັດຫຍັງ." 21ພວກອື່ນກໍເວົ້າວ່າ, "ຄຳນີ້ບໍ່
ແມ່ນຄຳເວົ້າຂອງຄົນທີ່ມີຜີສິງ ຜີຈະປົດຕາຂອງຄົນຕາບອດໄດ້ຫລື."

## ພວກຢິວປະຕິເສດບໍ່ຍອມຮັບພຣະເຢຊູ

22ເວລານັ້ນເປັນເທດສະການສະຫລອງພຣະວິຫານໃນກຸງເຢຣູຊາເລັມ. 23ເປັນລະດູໜາວ
ສ່ວນພຣະເຢຊູກຳລັງສະເດັດໄປມາໃນບໍລິເວນພຣະວິຫານທີ່ລະບຽງຂອງໂຊໂລໂມນ. 24ພວກ
ຢິວກໍພາກັນມາລ້ອມພຣະອົງແລ້ວທູນວ່າ, "ຈະໃຫ້ພວກເຮົາສົງໃສຢູ່ເຖິງປານໃດ ຖ້າທ່ານເປັນ
ພຣະຄຣິດຈົ່ງບອກໃຫ້ພວກເຮົາຮູ້ຄັກເສຍ." 25ພຣະເຢຊູຊົງຕອບເຂົາວ່າ, "ເຮົາໄດ້ບອກທ່ານ
ທັງຫລາຍແລ້ວ ແລະພວກທ່ານບໍ່ເຊື່ອ ກິດຈະການທີ່ເຮົານີ້ໄດ້ເຮັດໃນພຣະນາມພຣະບິດາຂອງ
ເຮົາກໍເປັນພະຍານຝ່າຍເຮົາ. 26ແຕ່ພວກທ່ານບໍ່ເຊື່ອເພາະພວກທ່ານບໍ່ເປັນແຕ່ຝູງແກະຂອງເຮົາ.
27ແກະຂອງເຮົາກໍຟັງສຽງຂອງເຮົາ ແລະເຮົາກໍຮູ້ຈັກຝູງແກະນັ້ນແລະເຂົາຕາມເຮົາໄປ. 28ຝ່າຍ
ເຮົາກໍປະທານຊີວິດອັນຕະຫລອດໄປເປັນນິດໃຫ້ແກ່ແກະນັ້ນ ແລະເຂົາຈະບໍ່ຈິບຫາຍຈັກເທື່ອ ບໍ່

ມີຜູ້ໃດຈະຍາດເຂົາອອກຈາກມືຂອງເຮົາໄດ້. 29ອັນທີ່ພຣະບິດາຂອງເຮົາໄດ້ຊົງປະທານໃຫ້ເຮົາ
ນັ້ນກໍໃຫຍ່ກວ່າສັບພະທຸກສິ່ງ[ກ] ແລະບໍ່ມີຜູ້ໃດຈະອາດຍາດອັນນັ້ນອອກຈາກພຣະຫັດພຣະບິດາ
ຂອງເຮົາໄດ້. 30ເຮົາກັບພຣະບິດາກໍເປັນອັນໜຶ່ງອັນດຽວກັນ.”

31ພວກຢິວກໍຍົກເອົາກ້ອນຫີນມາອີກຈະຄວ່າງໃສ່ພຣະອົງ. 32ພຣະເຢຊູຊົງກ່າວຕໍ່ເຂົາວ່າ,
“ເຮົາໄດ້ສະແດງໃຫ້ທ່ານທັງຫລາຍເຫັນການດີຫລາຍປະການທີ່ມາຈາກພຣະບິດາຂອງເຮົາ
ເພາະເຫດຂໍ້ໃດໃນການດີທັງຫລາຍນັ້ນພວກທ່ານຈຶ່ງຈະຄວ່າງກ້ອນຫີນໃສ່ເຮົາ.” 33ພວກຢິວ
ທູນພຣະອົງວ່າ, “ທີ່ພວກເຮົາຈະຄວ່າງກ້ອນຫີນໃສ່ເຈົ້ານັ້ນບໍ່ແມ່ນຍ້ອນການດີ ແຕ່ເພາະຄວາມ
ໝິ່ນປະໝາດພຣະເຈົ້າ ເພາະເຈົ້າເປັນພຽງມະນຸດແຕ່ຕັ້ງຕົວເປັນພຣະເຈົ້າ.”

34ພຣະເຢຊູຊົງຕອບເຂົາວ່າ, “ໃນພຣະບັນຍັດຂອງທ່ານທັງຫລາຍມີຄຳຂຽນໄວ້ແລ້ວບໍ່ແມ່ນ
ຫລືວ່າ ‘ຝ່າຍເຮົາໄດ້ກ່າວວ່າ ທ່ານທັງຫລາຍເປັນພະ.’ 35ຖ້າພຣະອົງຊົງເອີ້ນຜູ້ຮັບພຣະທຳຂອງ
ພຣະເຈົ້າວ່າ ເຂົາເປັນພະ (ພຣະຄຳພີນັ້ນຈະຖືກລົບລ້າງເສຍບໍ່ໄດ້.) 36ທ່ານທັງຫລາຍຈະກ່າວ
ຫາທ່ານ ຜູ້ທີ່ພຣະບິດາຊົງຕັ້ງໄວ້ແລະຊົງໃຊ້ເຂົ້າມາໃນໂລກວ່າ ‘ເຈົ້າກ່າວຄຳໝິ່ນປະໝາດ
ພຣະເຈົ້າ’ ເພາະເຮົາໄດ້ກ່າວວ່າ ‘ເຮົາເປັນບຸດຂອງພຣະເຈົ້າ’ ຢ່າງນັ້ນຫລື. 37ຖ້າເຮົາບໍ່ເຮັດ
ພຣະລາຊະກິດພຣະບິດາຂອງເຮົາກໍຢ່າໄດ້ເຊື່ອເຮົາ. 38ແຕ່ຖ້າເຮົາເຮັດພຣະລາຊະກິດນັ້ນ ເຖິງ
ວ່າທ່ານທັງຫລາຍບໍ່ເຊື່ອເຮົາກໍຈົ່ງເຊື່ອພຣະລາຊະກິດນັ້ນ ເພື່ອພວກທ່ານຈະໄດ້ຮູ້ແລະເຂົ້າໃຈ
ວ່າ ພຣະບິດາຊົງຢູ່ໃນເຮົາແລະເຮົາຢູ່ໃນພຣະບິດາ.” 39ເຫດສັນນີ້ເຂົາຈຶ່ງພະຍາຍາມຈັບພຣະ-
ອົງອີກ ແຕ່ພຣະອົງກໍສະເດັດໜີພົ້ນຈາກມືຂອງເຂົາໄປໄດ້.

40ແລ້ວພຣະອົງໄດ້ສະເດັດຂ້າມແມ່ນ້ຳຢໍແດນອີກ ໄປເຖິງບ່ອນໂຢຮັນໃຫ້ຮັບບັບຕິສະມາແຕ່
ກ່ອນນັ້ນ ແລະພຣະອົງກໍປະທັບຢູ່ທີ່ນັ້ນ. 41ມີຫລາຍຄົນໄດ້ພາກັນມາຫາພຣະອົງແລະກ່າວວ່າ,
“ໂຢຮັນບໍ່ໄດ້ເຮັດໝາຍສຳຄັນຈັກຢ່າງ ແຕ່ທຸກສິ່ງທີ່ໂຢຮັນກ່າວເຖິງທ່ານຜູ້ນີ້ກໍເປັນຄວາມຈິງທັງ
ໝົດ.” 42ໃນທີ່ນັ້ນມີຫລາຍຄົນໄດ້ເຊື່ອໃນພຣະອົງ.

# ບົດທີ 11

## ລາຊະໂຣສິ້ນຊີວິດ

1ມີຊາຍຄົນໜຶ່ງຊື່ລາຊະໂຣກຳລັງປ່ວຍຢູ່ທີ່ບ້ານເບັດທານີ ຄືບ້ານຂອງນາງມາຣີອາ ແລະ
ມາທາສອງເອື້ອຍນ້ອງ. 2ແມ່ນນາງມາຣີອາຜູ້ນີ້ທີ່ໄດ້ເອົານ້ຳມັນຫອມສົງອົງພຣະຜູ້ເປັນເຈົ້າ
ແລະໃຊ້ຜົມຂອງຕົນເຊັດພຣະບາດຂອງພຣະອົງ ລາຊະໂຣຜູ້ທີ່ປ່ວຍຜູ້ນັ້ນກໍເປັນນ້ອງຊາຍຂອງ
ຍິງຜູ້ນີ້. 3ເອື້ອຍທັງສອງໄດ້ໃຊ້ຄົນໄປເຝົ້າພຣະເຢຊູທູນວ່າ, “ນາຍເຈົ້າເອີຍ, ເບິ່ງແມ ຜູ້ທີ່ທ່ານ
ຮັກແພງນັ້ນ[ຂ] ກໍກຳລັງປ່ວຍຢູ່.” 4ເມື່ອພຣະເຢຊູຊົງໄດ້ຍິນດັ່ງນັ້ນແລ້ວກໍຊົງກ່າວວ່າ, “ການ
ປ່ວຍນີ້ບໍ່ເຖິງແກ່ຄວາມຕາຍດອກ ແຕ່ເກີດຂຶ້ນເພື່ອກຽດຕິຍົດຂອງພຣະເຈົ້າ ເພື່ອໃຫ້ພຣະບຸດ
ຂອງ ພຣະເຈົ້າຊົງໄດ້ຮັບກຽດຕິຍົດເພາະການປ່ວຍນີ້.” 5ສ່ວນພຣະເຢຊູກໍຊົງຮັກມາທາ ແລະ
ນ້ອງສາວຂອງນາງກັບລາຊະໂຣ.

---

[ກ]ຫລືວ່າ “ພຣະບິດາຂອງເຮົາຜູ້ຊົງປະທານແກະນັ້ນໃຫ້ເຮົາກໍຊົງເປັນໃຫຍ່ກວ່າສັບພະສິ່ງ.” [ຂ]ຫລືວ່າ “ຜູ້ທີ່ທ່ານເປັນສະຫາຍຮັກນັ້ນ” (ເບິ່ງ ຢຮ 22:14 ຕໍ່).

6ຄັນພຣະອົງຊົງໄດ້ຍິນວ່າລາຊະໂຣປ່ວຍຢູ່ ພຣະອົງຈຶ່ງຊົງພັກຢູ່ໃນບ່ອນພຣະອົງຊົງຢູ່ນັ້ນອີກ
ສອງວັນ. 7ຫລັງຈາກນັ້ນ ພຣະອົງຊົງກ່າວກັບພວກສາວົກວ່າ, "ພວກເຮົາພາກັນເຂົ້າໄປໃນ
ແຂວງຢູດາຍອີກເທາະ." 8ພວກສາວົກໄດ້ທູນພຣະອົງວ່າ, "ອາຈານເຈົ້າຂ້າເອີຍ, ເມື່ອບໍ່ເຫິງນີ້
ພວກຢິວຫາໂອກາດເອົາຫີນຄວ່າງໃສ່ທ່ານໃຫ້ຕາຍ ແລ້ວທ່ານຍັງຈະກັບໄປທີ່ນັ້ນອີກຫລື."
9ພຣະເຢຊູຊົງຕອບວ່າ, "ວັນໜຶ່ງມີສິບສອງຊົ່ວໂມງບໍ່ແມ່ນຫລື ຖ້າຄົນໃດຫາກຍ່າງໄປໃນເວລາ
ກາງເວັນກໍຈະບໍ່ຊູນສະດຸດ ເພາະວ່າເພິ່ນເຫັນຄວາມສະຫວ່າງຂອງໂລກນີ້. 10ແຕ່ຖ້າຜູ້ໃດຫາກ
ຍ່າງໄປໃນເວລາກາງຄືນກໍຈະຊູນສະດຸດ ເພາະວ່າເພິ່ນບໍ່ມີຄວາມສະຫວ່າງໃນຕົວ."

11ເມື່ອພຣະອົງຊົງກ່າວດັ່ງນີ້ແລ້ວກໍຊົງບອກພວກສາວົກວ່າ, "ລາຊະໂຣເພື່ອນຂອງເຮົາກໍ
ຫລັບໄປແລ້ວ ແຕ່ເຮົາໄປເພື່ອຈະປຸກລາວໃຫ້ຕື່ນ." 12ພວກສາວົກຈຶ່ງທູນພຣະອົງວ່າ, "ນາຍເຈົ້າ
ເອີຍ, ຖ້າຜູ້ປ່ວຍນອນຫລັບ ລາວກໍຄົງຈະດີປ່ວຍ." 13ສ່ວນພຣະເຢຊູກໍໄດ້ຊົງກ່າວເຖິງການ
ຕາຍຂອງລາຊະໂຣ ແຕ່ພວກສາວົກຄຶດວ່າພຣະອົງຊົງກ່າວເຖິງການນອນຫລັບໃຫ້ຫາຍເມື່ອຍ.

14ເຫດສັນນີ້ພຣະເຢຊູຈຶ່ງຊົງບອກເຂົາໂດຍແຈ່ມແຈ້ງວ່າ, "ລາຊະໂຣຕາຍແລ້ວ. 15ເຮົາຍິນດີ
ທີ່ເຮົາບໍ່ໄດ້ຢູ່ທີ່ນັ້ນເພາະເຫັນແກ່ທ່ານທັງຫລາຍ ເພື່ອທ່ານທັງຫລາຍຈະໄດ້ເຊື່ອ ພວກເຮົາພາ-
ກັນໄປຫາລາວເທາະ." 16ໂທມາທີ່ເອີ້ນວ່າແຝດ ໄດ້ເວົ້າກັບເພື່ອນສາວົກວ່າ, "ພວກເຮົາພາກັນ
ໄປເໝືອນກັນ ເພື່ອຈະໄດ້ຕາຍດ້ວຍກັນກັບພຣະອົງ."[ກ]

## ພຣະເຢຊູຊົງເປັນເຫດໃຫ້ຄືນມາທັງຊົງເປັນຊີວິດ

17ເມື່ອພຣະເຢຊູສະເດັດມາເຖິງກໍຊົງເຫັນວ່າ ລາຊະໂຣຢູ່ໃນອຸບໂມງຝັງສົບໄດ້ສີ່ວັນແລ້ວ.
18ອັນໜຶ່ງ, ບ້ານເບັດທານີນັ້ນຢູ່ໃກຈາກກຸງເຢຣູຊາເລັມປະມານພັນຫ້າຮ້ອຍວາ. 19ພວກຢິວ
ຫລາຍຄົນໄດ້ມາຫານາງມາທາແລະມາຣີອາ ເພື່ອເລົ້າໂລມໃຈເຂົາເນື່ອງດ້ວຍນ້ອງຊາຍຂອງ
ເຂົາ. 20ເມື່ອມາທາໄດ້ຍິນວ່າພຣະເຢຊູກຳລັງສະເດັດມາ ນາງກໍອອກໄປຕ້ອນຮັບພຣະອົງ ແຕ່
ສ່ວນມາຣີອານັ້ນນັ່ງຢູ່ໃນເຮືອນ. 21ນາງມາທາທູນພຣະເຢຊູວ່າ, "ນາຍເຈົ້າເອີຍ, ຖ້າທ່ານຢູ່ທີ່
ນີ້ນ້ອງຊາຍຂອງຂ້ານ້ອຍກໍຄົງບໍ່ຕາຍ. 22ແຕ່ບັດນີ້ກໍດີ, ຂ້ານ້ອຍຊາບວ່າ ສິ່ງໃດໆ ທີ່ທ່ານຈະ
ທູນຂໍຈາກພຣະເຈົ້າ ພຣະເຈົ້າຈະຊົງໂຜດປະທານແກ່ທ່ານ."

23ພຣະເຢຊູຊົງກ່າວຕໍ່ນາງວ່າ, "ນ້ອງຊາຍຂອງເຈົ້າຈະຄືນມາອີກ." 24ນາງມາທາທູນວ່າ,
"ຂ້ານ້ອຍກໍຊາບແລ້ວວ່າ ລາວຈະເປັນຄືນມາອີກໃນເວລາຄືນມາ ເມື່ອວັນສຸດທ້າຍນັ້ນ."
25ພຣະເຢຊູຊົງກ່າວຕໍ່ນາງວ່າ, "ເຮົານີ້ແຫລະ, ເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີ-
ວິດ ຜູ້ທີ່ວາງໃຈເຊື່ອຢູ່ໃນເຮົາ ເຖິງແມ່ນວ່າຕາຍໄປແລ້ວກໍຍັງຈະມີຊີວິດຢູ່. 26ແລະທຸກຄົນທີ່ຍັງ
ມີຊີວິດຢູ່ແລະວາງໃຈເຊື່ອຢູ່ໃນເຮົາກໍຈະບໍ່ຕາຍຈັກເທື່ອ ເຈົ້າເຊື່ອຂໍ້ນີ້ຫລື." 27ມາທາຈຶ່ງທູນພຣະ-
ອົງວ່າ, "ເຊື່ອຢູ່ແລ້ວ, ນາຍເຈົ້າເອີຍ ຂ້ານ້ອຍເຊື່ອແລ້ວວ່າທ່ານເປັນພຣະຄຣິດ ຄືພຣະບຸດ
ຂອງພຣະເຈົ້າທີ່ຕ້ອງສະເດັດມາໃນໂລກ."

## ພຣະເຢຊູຊົງພຣະກັນແສງ

28ເມື່ອທູນດັ່ງນັ້ນແລ້ວນາງຈຶ່ງກັບໄປເອີ້ນມາຣີອານ້ອງສາວຂອງຕົນໂດຍເວົ້າຄ່ອຍໆ ວ່າ,

[ກ]ຫລືວ່າ "ດ້ວຍກັນກັບລາວ."

“ອາຈານມາແລ້ວແລະເອີ້ນຫາເຈົ້າ.” 29ຄັນ ມາຣິອາ ໄດ້ຍິນແລ້ວນາງກໍລຸກຂຶ້ນໂລດໄປເຝົ້າພຣະ-
ອົງ. 30ສ່ວນ ພຣະເຢຊູ ບໍ່ໄດ້ສະເດັດເຂົ້າໄປໃນບ້ານ ແຕ່ຍັງປະທັບຢູ່ບ່ອນທີ່ ມາທາ ໄດ້ພົບພຣະ-
ອົງນັ້ນ. 31ເມື່ອພວກຢິວທີ່ຢູ່ໃນເຮືອນກັບ ມາຣິອາ ກຳລັງເລົ້າໂລມລາວຢູ່ ໄດ້ເຫັນ ມາຣິອາ ຟ້າວ
ລຸກຂຶ້ນອອກໄປ ເຂົາຈຶ່ງຕາມໄປນຶກວ່ານາງຈະໄປຍັງອຸບໂມງເພື່ອຮ້ອງໄຫ້ຢູ່ທີ່ນັ້ນ.

32ຄັນນາງມາເຖິງບ່ອນທີ່ ພຣະເຢຊູ ປະທັບຢູ່ແລະເຫັນພຣະອົງແລ້ວ ຈຶ່ງຂາບລົງທີ່ພຣະບາດ
ຂອງພຣະອົງທູນວ່າ, “ນາຍເຈົ້າເອີຍ, ຖ້າທ່ານຢູ່ທີ່ນີ້ນ້ອງຊາຍຂອງຂ້ານ້ອຍກໍຄົງບໍ່ຕາຍ.”
33ເມື່ອ ພຣະເຢຊູ ຊົງເຫັນນາງຮ້ອງໄຫ້ ແລະພວກ ຢິວ ທີ່ມາກັບນາງກຳລັງຮ້ອງໄຫ້ເໝືອນກັນ
ພຣະອົງຊົງວຸ້ນວາຍແລະຊົງສະເທືອນພຣະໄທ. 34ພຣະອົງຈຶ່ງຊົງຖາມວ່າ, “ໄດ້ເອົາສົບໄປໄວ້ທີ່
ໃດ” ເຂົາທູນຕອບວ່າ, “ນາຍເຈົ້າເອີຍ, ເຊີນມາເບິ່ງແມ.” 35ສ່ວນ ພຣະເຢຊູ ຊົງພຣະກັນແສງ.
36ພວກຢິວ ຈຶ່ງເວົ້າກັນວ່າ, “ເບິ່ງດູ, ເພິ່ນຮັກລາວພຽງໃດໜໍ.” 37ແຕ່ລາງຄົນເວົ້າວ່າ, “ຜູ້ນີ້ໄດ້
ປົດຕາຂອງຄົນຕາບອດນັ້ນ ແລ້ວຈະເຮັດໃຫ້ຄົນນີ້ບໍ່ຕາຍບໍ່ໄດ້ຫລື.”

## ຊົງບັນດານໃຫ້ລາຊະໂລເປັນຄືນມາ

38ພຣະເຢຊູຊົງສະເທືອນພຣະໄທອີກ ຈຶ່ງສະເດັດມາເຖິງອຸບໂມງຝັງສົບ ອຸບໂມງນັ້ນເປັນຖ້ຳ
ມີຫີນກ້ອນໜຶ່ງວາງອັດປາກໄວ້. 39ພຣະເຢຊູຊົງກ່າວວ່າ, “ຈົ່ງຍົກຫີນອອກເສຍ” ມາທາ ເອື້ອຍ
ຂອງຜູ້ຕາຍນັ້ນທູນວ່າ, “ນາຍເຈົ້າເອີຍ, ປານນີ້ສົບມີກິ່ນເໝັນແລ້ວ ເພາະລາວຕາຍໄດ້ສີ່ວັນ
ແລ້ວ.” 40ພຣະເຢຊູຊົງຕອບນາງວ່າ, “ເຮົາໄດ້ບອກເຈົ້າແລ້ວບໍ່ແມ່ນຫລືວ່າ ຖ້າເຈົ້າເຊື່ອຄົງຈະ
ໄດ້ເຫັນສະຫງ່າລາສີຂອງ ພຣະເຈົ້າ.” 41ດັ່ງນັ້ນເຂົາຈຶ່ງຍົກຫີນອອກ ຝ່າຍ ພຣະເຢຊູ ຊົງເງີຍ
ພຣະພັກຂຶ້ນໂດຍຊົງກ່າວວ່າ, “ໂອ ພຣະບິດາ ເອີຍ, ຂ້ານ້ອຍຂອບພຣະຄຸນພຣະອົງເພາະພຣະ-
ອົງຊົງໂຜດຟັງຂ້ານ້ອຍ. 42ຂ້ານ້ອຍຊາບວ່າພຣະອົງຊົງຟັງຂ້ານ້ອຍຢູ່ສະເໝີ ແຕ່ທີ່ຂ້ານ້ອຍເວົ້າ
ຢ່າງນີ້ກໍເພາະເຫັນແກ່ຄົນທັງຫລາຍທີ່ຢືນອ້ອມຢູ່ນີ້ ເພື່ອເຂົາຈະໄດ້ເຊື່ອວ່າແມ່ນພຣະອົງແຫລະ,
ທີ່ຊົງໃຊ້ຂ້ານ້ອຍມາ.” 43ເມື່ອຊົງກ່າວຢ່າງນັ້ນແລ້ວພຣະອົງຊົງເປັ່ງພຣະສຸລະສຽງວ່າ, “ລາຊະ-
ໂຣ ເອີຍ, ຈົ່ງອອກມາເສຍ.” 44ຜູ້ຕາຍນັ້ນກໍໄດ້ອອກມາ ມີຜ້າພັນຕີນແລະມື, ແລະມີຜ້າປົກໜ້າ
ໄວ້ ແລ້ວ ພຣະເຢຊູ ຈຶ່ງຊົງບອກເຂົາວ່າ, “ຈົ່ງແກ້ປ່ອຍໃຫ້ລາວໄປເສຍ.”

## ການປອງຮ້າຍພຣະເຢຊູ

*(ມທ 26:1-5; ມຣກ 14:1-2; ລກ 22:1-2)*

45ເຫດສັນນັ້ນພວກຢິວຫລາຍຄົນທີ່ໄດ້ມາຫາ ມາຣິອາ ແລະໄດ້ເຫັນການທີ່ ພຣະເຢຊູ ຊົງເຮັດ
ນັ້ນກໍວາງໃຈເຊື່ອໃນພຣະອົງ. 46ແຕ່ລາງຄົນໃນພວກເຂົານັ້ນໄດ້ໄປຫາພວກ ຟາຣີຊາຍ ເລົ່າ
ເລື່ອງການທີ່ ພຣະເຢຊູ ໄດ້ຊົງເຮັດນັ້ນໃຫ້ເຂົາຟັງ. 47ດັ່ງນັ້ນພວກປະໂລຫິດຕົນໃຫຍ່ກັບພວກ
ຟາຣີຊາຍ ຈຶ່ງເອີ້ນສະມາຊິກສະພາມາປະຊຸມໂດຍກ່າວວ່າ, “ພວກເຮົາຈະເຮັດແນວໃດ ເພາະ-
ວ່າຊາຍຜູ້ນີ້ໄດ້ເຮັດໝາຍສຳຄັນຫລາຍປະການ. 48ຖ້າເຮົາຈະປ່ອຍໃຫ້ລາວເຮັດຢູ່ຢ່າງນີ້ ຄົນ
ທັງຫລາຍ ກໍ ຈະ ເຊື່ອ ຖືລາວ ແລ້ວ ພວກ ໂຣມ ກໍ ຈະ ມາ ທຳລາຍ ພຣະວິຫານ ທັງ ປະເທດ ຊາດ ຂອງ
ເຮົາ.”

49ແຕ່ຜູ້ໜຶ່ງໃນພວກເຂົາຊື່ ກາຢະຟາ ເປັນມະຫາປະໂລຫິດປະຈຳການປີນັ້ນ ໄດ້ກ່າວແກ່ເຂົາ

ວ່າ, "ພວກທ່ານບໍ່ຮູ້ຈັກຫຍັງ, 50ແລະບໍ່ຄຶດເຫັນວ່າມັນຈະເປັນປະໂຫຍດແກ່ທ່ານທັງຫລາຍ ຖ້າ
ຈະໃຫ້ຄົນຜູ້ດຽວຕາຍ ແທນທີ່ຈະໃຫ້ທັງປະເທດຊາດຈິບຫາຍ." 51ທີ່ທ່ານໄດ້ກ່າວຄຳນັ້ນກໍບໍ່
ແມ່ນດ້ວຍລຳພັງຂອງຕົນເອງ ແຕ່ເພາະທ່ານເປັນມະຫາປະໂລຫິດໃນປີນັ້ນ ຈຶ່ງທຳນວາຍໄວ້
ກ່ອນວ່າ ພຣະເຢຊູຈະສິ້ນພຣະຊົນຕາງປະເທດຊາດ, 52ແລະບໍ່ແມ່ນແທນປະເທດຊາດຢ່າງ
ດຽວເທົ່ານັ້ນ ແຕ່ເພື່ອຮວບຮວມບຸດທັງຫລາຍຂອງພຣະເຈົ້າທີ່ແຕກຊະກັນໄປແລ້ວນັ້ນ ໃຫ້ເຂົ້າ
ເປັນພວກດຽວກັນ. 53ຕັ້ງແຕ່ວັນນັ້ນມາເຂົາໄດ້ວາງແຜນການຈະຂ້າພຣະອົງເສຍ.

54ເພາະເຫດນັ້ນ ພຣະເຢຊູບໍ່ໄດ້ສະເດັດໄປມາໃນຖ້າມກາງພວກຢິວໂດຍເປີດເຜີຍອີກ ແຕ່
ໄດ້ສະເດັດຈາກທີ່ນັ້ນໄປຍັງທ້ອງຖິ່ນຢູ່ໃກ້ປ່າເຖິງເມືອງໜຶ່ງຊື່ ເອຟຣາຢິມ ແລະປະທັບຢູ່ທີ່ນັ້ນ
ກັບພວກສາວົກ. 55ອັນໜຶ່ງ, ໃກ້ຈະເຖິງເທດສະການປັດສະຄາຂອງຊາດຢິວແລ້ວ ຫລາຍຄົນ
ໄດ້ອອກຈາກບ້ານເມືອງທົ່ວປະເທດ ຂຶ້ນເມືອຍັງກຸງເຢຣູຊາເລັມກ່ອນປັດສະຄາເພື່ອຈະຊຳລະ
ຕົວ. 56ເຂົາກຳລັງຕິດຕາມຊອກຫາພຣະເຢຊູ ແລະເມື່ອເຂົາຢືນຢູ່ໃນບໍລິເວນພຣະວິຫານຈຶ່ງເວົ້າ
ກັນວ່າ, "ທ່ານຄຶດເຫັນຢ່າງໃດ ເພິ່ນຈະບໍ່ມາໃນງານເທດສະການນີ້ຕີ້. 57ຝ່າຍພວກປະໂລຫິດ
ຕົນໃຫຍ່ແລະພວກຟາຣີຊາຍ ໄດ້ອອກຄຳສັ່ງໄວ້ວ່າ ຖ້າຜູ້ໃດຮູ້ວ່າ ພຣະອົງຢູ່ໃສ ໃຫ້ມາບອກ
ເຂົາເພື່ອຈະໄດ້ໄປຈັບພຣະອົງ.

# ບົດທີ 12

## ມາຣີອາເອົານ້ຳມັນຫອມສົງພຣະບາດທີ່ເບັດທານີ

*(ມທ 26:6-13; ມຣກ 14:3-9)*

1ກ່ອນເທດສະການປັດສະຄາຫົກວັນ ພຣະເຢຊູສະເດັດມາເຖິງບ້ານເບັດທານີ ຊຶ່ງເປັນທີ່ຢູ່
ຂອງລາຊະໂຣ ຜູ້ທີ່ພຣະອົງຊົງບັນດານໃຫ້ເປັນຄືນມາຈາກຕາຍ. 2ທີ່ນັ້ນເຂົາໄດ້ຈັດງານລ້ຽງ
ເພື່ອພຣະອົງ ມາທາເປັນຜູ້ຮັບໃຊ້ໃນໂຕະອາຫານ ຝ່າຍລາຊະໂຣກໍເປັນຜູ້ໜຶ່ງທີ່ຮ່ວມຮັບປະ-
ທານກັບພຣະອົງ. 3ນາງມາຣີອາໄດ້ເອົານ້ຳມັນຫອມລິຕຣາໜຶ່ງ ຊຶ່ງມີລາຄາແພງມາສົງພຣະ-
ບາດພຣະເຢຊູ ແລ້ວໃຊ້ຜົມຂອງຕົນເຊັດພຣະບາດຂອງພຣະອົງ ຈົນທົ່ວເຮືອນນັ້ນກໍຫອມກຸ້ມ
ດ້ວຍກິ່ນນ້ຳມັນນັ້ນ. 4ແຕ່ສາວົກຄົນໜຶ່ງຂອງພຣະອົງຊື່ຢູດາອິສະກາຣີອົດ (ຄືຜູ້ທີ່ຈະທໍລະຍົດຕໍ່
ພຣະອົງ) ໄດ້ກ່າວວ່າ, 5"ເຫດໃດຈຶ່ງບໍ່ຂາຍນ້ຳມັນນີ້ຕໍ່ລາຄາສາມຮ້ອຍເດນາຣິອົນ ແລ້ວແຈກໃຫ້
ຄົນຍາກຈົນ." 6ລາວເວົ້າຢ່າງນັ້ນບໍ່ແມ່ນເພາະລາວເອົາໃຈໃສ່ຕໍ່ຄົນຍາກຈົນ ແຕ່ເພາະລາວເປັນ
ຂະໂມຍແລະເປັນຜູ້ຖືຖົງເງິນ ແລະເຄີຍບຽດບັງເອົາເງິນທີ່ຢູ່ໃນຖົງນັ້ນ. 7ພຣະເຢຊູຊົງກ່າວວ່າ,
"ຊ່າງນາງເທາະ ໃຫ້ລາວຮັກສາສິ່ງນີ້ໄວ້ສຳລັບວັນຝັງສົບຂອງເຮົາ. 8ດ້ວຍວ່າຄົນຍາກຈົນມີຢູ່
ກັບພວກທ່ານສະເໝີ ແຕ່ຝ່າຍເຮົາ, ບໍ່ຢູ່ກັບທ່ານສະເໝີ."

## ການປອງຮ້າຍລາຊະໂຣ

9ຝ່າຍພວກຢິວຈຳນວນຫລາຍໄດ້ຮູ້ວ່າພຣະອົງປະທັບຢູ່ທີ່ນັ້ນ ເຂົາໄດ້ພາກັນມາບໍ່ແມ່ນເພາະ
ເຫັນແກ່ພຣະເຢຊູເທົ່ານັ້ນ ແຕ່ປະການໜຶ່ງ, ຢາກເຫັນລາຊະໂຣ ຜູ້ຊຶ່ງພຣະອົງໄດ້ຊົງບັນດານ
ໃຫ້ເປັນຄືນມາຈາກຕາຍນັ້ນ. 10ດັ່ງນັ້ນພວກປະໂລຫິດຕົນໃຫຍ່ຈຶ່ງປຶກສາກັນເພື່ອຈະຂ້າລາຊະ-

ໂຣ ເສຍເໝືອນກັນ. 11ເພາະ ລາຊະໂຣ ເປັນຕົ້ນເຫດເຮັດໃຫ້ຄົນຢິວຫລາຍຄົນອອກຈາກພວກເຂົາ
ໄປເຊື່ອຖືພຣະເຢຊູ.

## ສະເດັດເຂົ້າກຸງຢ່າງຜູ້ມີໄຊ

*(ມທ 21:1-11; ມຣກ 11:1-11; ລກ 19:28-40)*

12ວັນໜ້າມາປະຊາຊົນຫລວງຫລາຍທີ່ໄດ້ມາໃນງານເທດສະການນັ້ນ ໄດ້ຍິນວ່າພຣະເຢຊູ
ສະເດັດເຂົ້າກຸງ ເຢຣູຊາເລັມ. 13ເຂົາກໍພາກັນຖືກ້ານຕານອອກໄປຕ້ອນຮັບພຣະອົງ ໂຫ່ຮ້ອງວ່າ,
"ໂຮຊັນນາ, ຂໍໃຫ້ທ່ານຜູ້ສະເດັດມາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ ຄືພຣະມະຫາກະສັດ
ຂອງຊາດອິສຣາເອນ ຊົງພຣະຈະເລີນ." 14ເມື່ອພຣະເຢຊູຊົງພົບລໍນ້ອຍໂຕໜຶ່ງ ພຣະອົງຈຶ່ງຊົງ
ຂຶ້ນປະທັບລໍນັ້ນເໝືອນດັ່ງມີຄຳຂຽນໄວ້ວ່າ, 15"ບຸດຍິງຂອງຊີໂອນເອີຍ, ຢ່າຊູ່ຢ້ານເທາະ ນີ້
ແຫລະ, ມະຫາກະສັດຂອງທ່ານກໍປະທັບລໍນ້ອຍສະເດັດມາ." 16ແຕ່ທີວທີພວກສາວົກຂອງ
ພຣະອົງ ບໍ່ໄດ້ເຂົ້າໃຈເຫດການເຫລົ່ານັ້ນ ແຕ່ວ່າເມື່ອພຣະເຢຊູໄດ້ຊົງຮັບກຽດຕິຍົດແລ້ວເຂົາຈຶ່ງ
ລະນຶກໄດ້ວ່າ ມີຄຳຢ່າງນັ້ນຂຽນໄວ້ເຖິງເລື່ອງພຣະອົງ ທັງມີຄົນໄດ້ເຮັດຢ່າງນັ້ນຖວາຍພຣະອົງ.
17ຄົນທັງປວງທີ່ຢູ່ກັບພຣະອົງ ເມື່ອພຣະອົງໄດ້ຊົງເອີ້ນລາຊະໂຣໃຫ້ອອກມາຈາກອຸບໂມງຝັງ
ສົບ ແລະຊົງບັນດານໃຫ້ລາວເປັນຄືນມາຈາກຕາຍນັ້ນ ກໍເປັນພະຍານເລື່ອງການເຫລົ່ານັ້ນ.
18ເພາະເຫດນີ້ແຫລະ, ປະຊາຊົນທັງຫລາຍພາກັນອອກໄປຫາພຣະອົງ ກໍເພາະໄດ້ຍິນວ່າພຣະ-
ອົງຊົງເຮັດໝາຍສຳຄັນນັ້ນ. 19ຝ່າຍພວກຟາຣິຊາຍຈຶ່ງເວົ້າກັນວ່າ, "ທ່ານທັງຫລາຍບໍ່ເຫັນຫລື
ວ່າ ພວກທ່ານເຮັດອັນໃດກໍບໍ່ໄດ້ປະໂຫຍດຈັກຢ່າງ ເບິ່ງແມ, ໝົດທັງໂລກກໍຕິດຕາມມັນໄປ."

## ຊາວກຣີກລາງຄົນສະແຫວງຫາພຣະເຢຊູ

20ໃນໝູ່ຄົນທັງຫລາຍທີ່ຂຶ້ນໄປນະມັດສະການ ໃນງານເທດສະການນັ້ນມີຊາວກຣີກແດ່.
21ຊາວກຣີກເຫລົ່ານີ້ໄດ້ໄປຫາຟີລິບ ຊຶ່ງມາຈາກບ້ານເບັດຊາອີດາແຂວງຄາລີເລ ຈຶ່ງກ່າວກັບ
ທ່ານວ່າ, "ນາຍເອີຍ, ພວກຂ້ານ້ອຍຢາກເຫັນທ່ານເຢຊູແທ້." 22ຟີລິບຈຶ່ງໄປບອກອັນເດອາ
ແລ້ວອັນເດອາກັບຟີລິບໄດ້ໄປທູນພຣະເຢຊູ. 23ຝ່າຍພຣະເຢຊູຊົງຕອບເຂົາວ່າ, "ເວລາທີ່ບຸດ
ມະນຸດຕ້ອງຮັບກຽດນັ້ນກໍມາເຖິງແລ້ວ. 24ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າເມັດ
ເຂົ້າບໍ່ຕົກລົງໃນດິນແລະບໍ່ຕາຍໄປກໍຄົງຈະເປັນຢູ່ແຕ່ເມັດດຽວ ແຕ່ຖ້າມັນຕາຍໄປກໍຈະເກີດຜົນ
ຫລາຍ. 25ຜູ້ທີ່ຮັກຊີວິດຂອງຕົນກໍຕ້ອງເສຍຊີວິດ ແລະຜູ້ທີ່ຊັງຊີວິດຂອງຕົນໃນໂລກນີ້ ກໍຈະ
ຮັກສາຊີວິດນັ້ນໄວ້ ສຳລັບຊີວິດອັນຕະຫລອດໄປເປັນນິດ. 26ຖ້າຜູ້ໃດປະຕິບັດເຮົາ ໃຫ້ຜູ້ນັ້ນ
ຕິດຕາມເຮົາມາ ແລະເຮົາຢູ່ທີ່ໃດ ຜູ້ປະຕິບັດເຮົາຈະຢູ່ທີ່ນັ້ນເໝືອນກັນ ຖ້າຜູ້ໃດປະຕິບັດເຮົາ
ພຣະບິດາຈະຊົງປະທານກຽດຕິຍົດແກ່ຜູ້ນັ້ນ.

## ບຸດມະນຸດຈະຕ້ອງຖືກຍົກຂຶ້ນຈາກແຜ່ນດິນ

27"ບັດນີ້ຈິດໃຈຂອງເຮົາວຸ້ນວາຍ ແລະເຮົາຈະວ່າຢ່າງໃດ ຈະວ່າ ໂອພຣະບິດາເອີຍ, ຂໍໃຫ້
ຂ້ານ້ອຍລອດພົ້ນຈາກຍາມນີ້ທ້ອນ ຢ່າງນັ້ນຫລື ກໍວ່າບໍ່ໄດ້ ທີ່ເຮົາໄດ້ມາເຖິງຍາມນີ້ກໍເພື່ອການ
ນີ້ແຫລະ. 28ໂອ ພຣະບິດາເອີຍ, ຂໍໃຫ້ພຣະນາມຂອງພຣະອົງຈົ່ງໄດ້ຮັບກຽດ" ແລ້ວກໍມີພຣະສຸ-
ລະສຽງດັງມາຈາກຟ້າວ່າ, "ເຮົາໄດ້ໃຫ້ຮັບກຽດແລ້ວແລະເຮົາຈະໃຫ້ຮັບກຽດອີກ." 29ຄົນທັງ-

ຫລາຍທີ່ຢືນຢູ່ຫັ້ນໄດ້ຍິນສຽງນີ້ແລະເວົ້າວ່າ, "ສຽງຟ້າຮ້ອງ" ຄົນອື່ນໆ ກໍເວົ້າວ່າ, "ເທວະດາຕົນ
ໜຶ່ງໄດ້ສົນທະນາກັບທ່ານ." 30ພຣະເຢຊູຊົງຕອບວ່າ, "ສຽງທີ່ເກີດຂຶ້ນນັ້ນບໍ່ແມ່ນສຳລັບເຮົາ ແຕ່
ສຳລັບທ່ານທັງຫລາຍນັ້ນແຫລະ. 31ບັດນີ້ເຖິງເວລາພິພາກສາໂລກນີ້ ບັດນີ້ຜູ້ປົກຄອງໂລກນີ້ຈະ
ຖືກກຳຈັດອອກເສຍ. 32ຝ່າຍເຮົາ, ເມື່ອຖືກຍົກຂຶ້ນຈາກແຜ່ນດິນໂລກແລ້ວ ເຮົາກໍຈະຊັກນຳຄົນ
ທັງຫລາຍມາຫາເຮົາ." 33(ພຣະອົງຊົງກ່າວດັ່ງນີ້ກໍເພື່ອສະແດງວ່າພຣະອົງຈະສິ້ນພຣະຊົນຢ່າງ-
ໃດ.)

34ຄົນທັງຫລາຍຈຶ່ງທູນພຣະອົງວ່າ, "ພວກເຮົາໄດ້ຍິນຈາກພຣະບັນຍັດວ່າ ພຣະຄຣິດຊົງຕັ້ງ
ຢູ່ຕະຫລອດໄປເປັນນິດ ແລ້ວເຫດໃດ ທ່ານຈຶ່ງກ່າວວ່າບຸດມະນຸດຕ້ອງຖືກຍົກຂຶ້ນ ບຸດມະນຸດ
ນັ້ນຄືຜູ້ໃດ." 35ພຣະເຢຊູຊົງຕອບເຂົາວ່າ, "ຄວາມສະຫວ່າງຈະຍັງຢູ່ກັບທ່ານທັງຫລາຍອີກ
ໜ້ອຍໜຶ່ງ ເມື່ອຍັງມີຄວາມສະຫວ່າງຢູ່ກໍຈົ່ງຍ່າງໄປເທາະ ເພາະຢ້ານວ່າຄວາມມືດຈະຕາມມາ
ທັນພວກທ່ານ ຜູ້ທີ່ຫຍ່າງໄປມາໃນຄວາມມືດກໍບໍ່ຮູ້ວ່າຕົນກຳລັງໄປໃສ. 36ເມື່ອທ່ານທັງຫລາຍຍັງ
ມີຄວາມສະຫວ່າງຢູ່ ຈົ່ງວາງໃຈເຊື່ອໃນຄວາມສະຫວ່າງນັ້ນ ເພື່ອຈະໄດ້ເປັນຄົນຝ່າຍຄວາມສະ-
ຫວ່າງ."

## ຄວາມບໍ່ເຊື່ອຖືຂອງພວກຢິວ

ເມື່ອພຣະເຢຊູຊົງກ່າວດັ່ງນັ້ນແລ້ວ ພຣະອົງກໍສະເດັດອອກຈາກເຂົາໄປລີ້ຕົນເສຍ.
37ເຖິງແມ່ນວ່າພຣະອົງໄດ້ຊົງເຮັດໝາຍສຳຄັນຫລາຍປະການຕໍ່ໜ້າເຂົາ ເຂົາກໍຍັງບໍ່ວາງໃຈ
ເຊື່ອໃນພຣະອົງ. 38ທັງນີ້ເພື່ອຈະສຳເລັດຕາມຄຳຂອງເອຊາຢາຜູ້ປະກາດພຣະທຳ ຊຶ່ງວ່າ,
"ພຣະອົງເຈົ້າເອີຍ, ຜູ້ໃດໄດ້ເຊື່ອສິ່ງທີ່ຂ້າພຣະອົງໄດ້ປະກາດແລະພຣະກອນຂອງພຣະອົງໄດ້ຊົງ
ສະແດງແກ່ຜູ້ໃດ." 39ສັນນັ້ນເຂົາຈຶ່ງເຊື່ອບໍ່ໄດ້ ເພາະເອຊາຢາໄດ້ກ່າວໄວ້ອີກວ່າ,

40 "ພຣະອົງໄດ້ຊົງເຮັດໃຫ້ຕາຂອງເຂົາບອດໄປ
ແລະໃຫ້ຈິດໃຈຂອງເຂົາແຂງກະດ້າງ
ຢ້ານວ່າເຂົາຈະເຫັນດ້ວຍຕາແລະສັງເກດຮູ້ດ້ວຍໃຈ
ແລ້ວຈະກັບໃຈໃໝ່ແລ້ວເຮົາຈະໂຜດໃຫ້ເຂົາດີ."

41ເອຊາຢາໄດ້ກ່າວດັ່ງນີ້ກໍເພາະທ່ານໄດ້ເຫັນສະຫງ່າລາສີຂອງພຣະອົງ ແລະໄດ້ກ່າວເຖິງເລື່ອງ
ພຣະອົງ.

42ເຖິງປານນັ້ນກໍດີຍັງມີເຈົ້ານາຍຫລາຍຄົນໄດ້ເຊື່ອໃນພຣະອົງ ແຕ່ເຂົາບໍ່ໄດ້ເປີດເຜີຍເພາະ
ຢ້ານພວກຟາຣີຊາຍຈະຂັບໄລ່ເຂົາອອກຈາກໂຮງທຳມະເທດສະໜາ. 43ດ້ວຍວ່າເຂົາຮັກກຽດຕິ-
ຍົດຈາກມະນຸດຫລາຍກວ່າກຽດຕິຍົດຈາກພຣະເຈົ້າ.

## ຖ້ອຍຄຳຂອງພຣະເຢຊູເປັນຫລັກພິພາກສາ

44ພຣະເຢຊູຊົງເປັ່ງສຽງກ່າວວ່າ, "ຜູ້ທີ່ເຊື່ອໃນເຮົາກໍບໍ່ແມ່ນເຊື່ອໃນເຮົາ ແຕ່ເຊື່ອໃນພຣະອົງ
ຜູ້ຊົງໃຊ້ເຮົາມາ. 45ແລະຜູ້ທີ່ເຫັນເຮົາກໍເຫັນພຣະອົງຜູ້ຊົງໃຊ້ເຮົາມາ. 46ເຮົານີ້ຄືຄວາມສະຫວ່າງ
ໄດ້ເຂົ້າມາໃນໂລກເພື່ອທຸກຄົນທີ່ເຊື່ອໃນເຮົາຈະບໍ່ຕັ້ງຢູ່ໃນຄວາມມືດ. 47ຖ້າຜູ້ໃດໄດ້ຍິນຖ້ອຍຄຳ
ຂອງເຮົາ ແລະບໍ່ໄດ້ຖືຮັກສາຖ້ອຍຄຳເຫລົ່ານັ້ນຝ່າຍເຮົາກໍບໍ່ພິພາກສາຜູ້ນັ້ນ ເພາະວ່າເຮົາບໍ່ໄດ້

ມາເພື່ອພິພາກສາໂລກ ແຕ່ມາເພື່ອໂຜດເອົາໂລກໃຫ້ພົ້ນ. [48]ຜູ້ທີ່ຖິ້ມເຮົາແລະບໍ່ຮັບເອົາຖ້ອຍຄຳ
ຂອງເຮົາກໍມີສິ່ງທີ່ພິພາກສາຕົນແລ້ວ ຖ້ອຍຄຳທີ່ເຮົາໄດ້ກ່າວແລ້ວນັ້ນແຫລະ, ຈະພິພາກສາຜູ້
ນັ້ນໃນວັນສຸດທ້າຍ. [49]ເພາະເຮົາບໍ່ໄດ້ກ່າວຕາມລຳພັງໃຈຂອງເຮົາເອງ ແຕ່ຊຶ່ງເຮົາກ່າວແລະ
ເວົ້ານັ້ນ ພຣະບິດາຜູ້ຊົງໃຊ້ເຮົາມາ, ພຣະອົງນັ້ນເອງໄດ້ບັນຊາໃຫ້ແກ່ເຮົາ. [50]ແລະເຮົາຮູ້ວ່າ
ພຣະບັນຊາຂອງພຣະອົງນັ້ນເປັນຊີວິດອັນຕະຫລອດໄປເປັນນິດ ເຫດສັນນັ້ນສິ່ງທີ່ເຮົາເວົ້າ ເຮົາ
ກໍເວົ້າຕາມທີ່ພຣະບິດາຊົງບັນຊາໄວ້ແກ່ເຮົາ.”

# ບົດທີ 13

## ພຣະເຢຊູຊົງລ້າງຕີນຂອງພວກສາວົກ

[1]ກ່ອນເຖິງເວລາເທດສະການປັດສະຄາ ພຣະເຢຊູຊົງຊາບວ່າຍາມຂອງຕົນທີ່ຈະສະເດັດ
ຈາກໂລກນີ້ເມືອຫາພຣະບິດາເຖິງແລ້ວ ພຣະອົງໄດ້ຊົງຮັກພວກຂອງພຣະອົງທີ່ຢູ່ໃນໂລກນີ້
ພຣະອົງຊົງຮັກຈົນເຖິງທີ່ສຸດ. [2]ຂະນະເມື່ອຮັບປະທານອາຫານຢູ່ນັ້ນ (ມານໄດ້ເຂົ້າດົນໃຈຢູດາ
ອິສະກາຣີອົດລູກຂອງຊີໂມນ ໃຫ້ທໍລະຍົດຕໍ່ພຣະອົງ), [3]ພຣະເຢຊູຊົງຊາບວ່າ ພຣະບິດາໄດ້
ຊົງປະທານສິ່ງທັງປວງໃຫ້ຢູ່ໃນພຣະຫັດຂອງພຣະອົງ ແລະຊົງຊາບວ່າພຣະອົງສະເດັດມາຈາກ
ພຣະເຈົ້າ ແລະຈະສະເດັດເມືອຫາພຣະເຈົ້າ. [4]ພຣະອົງຊົງລຸກຂຶ້ນຈາກການຮັບປະທານອາ-
ຫານ, ຊົງຖອດເຄື່ອງທົງຊັ້ນນອກອອກວາງໄວ້, ແລະຊົງເອົາຜ້າເຊັດຕົວມາຮັດແອວຂອງພຣະ-
ອົງ. [5]ພຣະອົງຊົງຖອກນ້ຳໃສ່ອ່າງແລ້ວຊົງຕັ້ງຕົ້ນລ້າງຕີນຂອງພວກສາວົກ ແລະເຊັດດ້ວຍຜ້າ
ຮັດແອວນັ້ນ.

[6]ພຣະອົງໄດ້ສະເດັດມາເຖິງຊີໂມນເປໂຕ ແລະລາວໄດ້ທູນພຣະອົງວ່າ, “ນາຍເຈົ້າເອີຍ,
ທ່ານຈະລ້າງຕີນຂອງຂ້ານ້ອຍຫລື.” [7]ພຣະເຢຊູຊົງຕອບລາວວ່າ, “ສິ່ງທີ່ເຮົາເຮັດໃນເວລານີ້
ທ່ານຍັງບໍ່ຮູ້ເລື່ອງ ແຕ່ພາຍຫລັງທ່ານຈະເຂົ້າໃຈ.” [8]ເປໂຕຈຶ່ງທູນວ່າ, “ທ່ານຈະລ້າງຕີນຂອງ
ຂ້ານ້ອຍບໍ່ໄດ້ຈັກເທື່ອ” ພຣະເຢຊູຊົງຕອບວ່າ, “ຖ້າເຮົາບໍ່ລ້າງທ່ານ ທ່ານຈະມີສ່ວນໃນເຮົາບໍ່
ໄດ້.” [9]ຊີໂມນເປໂຕທູນວ່າ, “ນາຍເຈົ້າເອີຍ, ບໍ່ແມ່ນແຕ່ຕີນເທົ່ານັ້ນ ແຕ່ຂໍລ້າງມືແລະຫົວຂອງ
ຂ້ານ້ອຍເໝືອນກັນ.” [10]ພຣະເຢຊູຊົງກ່າວຕໍ່ເປໂຕວ່າ, “ຜູ້ທີ່ອາບນ້ຳແລ້ວບໍ່ຈຳເປັນລ້າງຕົວອີກ
ລ້າງແຕ່ຕີນເທົ່ານັ້ນ ເພາະສະອາດໝົດທັງຕົວແລ້ວພວກທ່ານກໍສະອາດແລ້ວແຕ່ບໍ່ແມ່ນທຸກຄົນ.”
[11]ເພາະພຣະອົງຊົງຮູ້ແລ້ວວ່າໃຜຈະທໍລະຍົດຕໍ່ພຣະອົງ ເພາະເຫດນັ້ນພຣະອົງຈຶ່ງຊົງກ່າວວ່າ,
“ທ່ານທັງຫລາຍບໍ່ສະອາດທຸກຄົນ.”

[12]ເຫດສັນນີ້ເມື່ອພຣະອົງຊົງລ້າງຕີນຂອງເຂົາແລ້ວ ພຣະອົງກໍຊົງໃສ່ເຄື່ອງທົງຊັ້ນນອກຂອງ
ຕົນອີກ ແລ້ວປະທັບລົງຈຶ່ງຊົງຖາມເຂົາວ່າ, “ທ່ານທັງຫລາຍເຂົ້າໃຈໃນສິ່ງທີ່ເຮົາໄດ້ເຮັດຕໍ່ພວກ
ທ່ານແລ້ວຫລື. [13]ທ່ານທັງຫລາຍເອີ້ນເຮົາວ່າອາຈານແລະນາຍເຈົ້າ ພວກທ່ານເອີ້ນຖືກຕ້ອງ
ແລ້ວ ເພາະເຮົາເປັນຢ່າງນັ້ນ. [14]ເຫດສັນນັ້ນເຮົາຜູ້ເປັນນາຍ ແລະອາຈານຂອງພວກທ່ານໄດ້
ລ້າງຕີນຂອງທ່ານ ພວກທ່ານກໍຄວນລ້າງຕີນຂອງກັນແລະກັນເໝືອນກັນ. [15]ດ້ວຍວ່າເຮົາໄດ້
ວາງແບບຢ່າງໃຫ້ພວກທ່ານແລ້ວ ເພື່ອທ່ານຈະໄດ້ເຮັດເໝືອນດັ່ງເຮົາໄດ້ເຮັດຕໍ່ພວກທ່ານແລ້ວ.

16ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຂ້າໃຊ້ບໍ່ທ່ອນໃຫຍ່ກວ່ານາຍຂອງຕົນ ຜູ້ທີ່ຖືກໃຊ້
ໄປບໍ່ທ່ອນໃຫຍ່ກວ່າຜູ້ໃຊ້ຕົນໄປນັ້ນ. 17ຖ້າທ່ານທັງຫລາຍຮູ້ສິ່ງເຫລົ່ານີ້ແລະເຮັດຕາມ ທ່ານກໍ
ເປັນສຸກ.
18ເຮົາບໍ່ເວົ້າເຖິງພວກທ່ານທຸກຄົນ ຝ່າຍເຮົາກໍຮູ້ຈັກຜູ້ທີ່ເຮົາໄດ້ເລືອກໄວ້ແລ້ວ ແຕ່ຕ້ອງເປັນ
ຈິງຕາມຂໍ້ພຣະຄຳພີທີ່ວ່າ 'ຜູ້ທີ່ຮັບປະທານອາຫານຂອງເຮົາກໍຍົກສົ້ນຕີນໃສ່ເຮົາ.' 19ແຕ່ເວລາ
ບັດນີ້ເຮົາບອກທ່ານທັງຫລາຍກ່ອນການນັ້ນເກີດຂຶ້ນ ເພື່ອວ່າເມື່ອມັນເກີດຂຶ້ນແລ້ວພວກທ່ານຈະ
ໄດ້ເຊື່ອວ່າເຮົານີ້ແຫລະ, ແມ່ນຜູ້ນັ້ນ. 20ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຜູ້ໃດຮັບ
ຕ້ອນຜູ້ທີ່ເຮົາໃຊ້ໄປກໍຮັບຕ້ອນເຮົາເໝືອນກັນ ແລະຜູ້ທີ່ຮັບຕ້ອນເຮົາກໍຮັບຕ້ອນພຣະອົງຜູ້ຊົງໃຊ້
ເຮົາມາ."

## ຊົງທຳນວາຍວ່າຢູດາຈະມອບພຣະອົງໄວ້

*(ມທ 26:20-25; ມຣກ 14:17-21; ລກ 22:21-23)*

21ເມື່ອ ພຣະເຢຊູ ຊົງກ່າວດັ່ງນັ້ນ ແລ້ວພຣະອົງກໍຊົງວຸ້ນວາຍ ໃນພຣະໄທ ແລະຊົງກ່າວ ເປັນ
ພະຍານວ່າ, "ເຮົາບອກພວກທ່ານຕາມຄວາມຈິງວ່າ ຄົນໜຶ່ງໃນພວກທ່ານຈະທໍລະຍົດຕໍ່ເຮົາ."
22ພວກສາວົກກໍເບິ່ງໜ້າກັນແລະສົງໄສວ່າ ຄົນທີ່ພຣະອົງກ່າວເຖິງນັ້ນຄືຜູ້ໃດ. 23ມີສາວົກຄົນ
ໜຶ່ງທີ່ ພຣະເຢຊູ ຊົງຮັກໄດ້ເນີ້ງກາຍລົງອີງພຣະຊວງຂອງພຣະອົງ. 24ຊີໂມນ ເປໂຕ ຈຶ່ງຍົກໜ້າໃສ່
ສາວົກຜູ້ນັ້ນກ່າວວ່າ, "ຈົ່ງຖາມວ່າຄົນທີ່ເພິ່ນເວົ້ານັ້ນແມ່ນຜູ້ໃດ." 25ຂະນະທີ່ຍັງອີງພຣະຊວງ
ຂອງພຣະອົງ ສາວົກຜູ້ນັ້ນກໍທູນຖາມວ່າ, "ນາຍເຈົ້າເອີຍ, ແມ່ນຜູ້ໃດ." 26ພຣະເຢຊູຊົງຕອບ
ວ່າ, "ເຮົາຈະເອົາອາຫານຄຳນີ້ຈ້ຳແລ້ວຍື່ນໃຫ້ຜູ້ໃດ ກໍແມ່ນຜູ້ນັ້ນແຫລະ" ເມື່ອຊົງຈ້ຳອາຫານຄຳ
ນັ້ນແລ້ວ ພຣະອົງຊົງຍື່ນໃຫ້ແກ່ຢູດາ ລູກຊີໂມນ ອິສະກາຣີອົດ. 27ຫລັງຈາກຢູດາ ໄດ້ກິນອາ-
ຫານຄຳນັ້ນແລ້ວ ຊາຕານ ຈຶ່ງເຂົ້າຢູ່ໃນໃຈລາວ ພຣະເຢຊູ ຈຶ່ງຊົງບອກຢູດາວ່າ, "ອັນທີ່ທ່ານຈະ
ເຮັດນັ້ນກໍຈົ່ງເຮັດໄວໆ ແມ." 28ໃນບັນດາຜູ້ທີ່ນັ່ງຮ່ວມໂຕະຢູ່ນັ້ນບໍ່ມີຜູ້ໃດໄດ້ເຂົ້າໃຈວ່າ ດ້ວຍ
ເຫດໃດພຣະອົງຈຶ່ງຊົງກ່າວ ແກ່ລາວຢ່າງນັ້ນ. 29ດັ່ງນັ້ນລາງຄົນກໍຄຶດວ່າເປັນເພາະ ຢູດາ ຖືຖົງ
ເງິນ ພຣະເຢຊູ ຈຶ່ງຊົງກ່າວກັບລາວວ່າ, "ຈົ່ງຊື້ສິ່ງຂອງທີ່ພວກເຮົາຕ້ອງການສຳລັບງານເທດສະ-
ການນີ້" ຫລືເພື່ອຈະໃຫ້ລາວທານແກ່ຄົນຍາກຈົນ. 30ພາຍຫລັງທີ່ຢູດາ ໄດ້ຮັບອາຫານຄຳນັ້ນ-
ແລ້ວລາວກໍອອກໄປທັນທີ ໃນຂະນະນັ້ນເປັນເວລາກາງຄືນ.

## ພຣະບັນຍັດຂໍ້ໃໝ່

31ເມື່ອ ຢູດາ ອອກໄປ ແລ້ວ ພຣະເຢຊູ ຊົງກ່າວວ່າ, "ບັດນີ້ບຸດມະນຸດໄດ້ຮັບກຽດຕິຍົດ ແລ້ວ
ແລະ ພຣະເຈົ້າ ກໍຊົງຮັບກຽດຕິຍົດ ເພາະບຸດມະນຸດ. 32ຖ້າ ພຣະເຈົ້າ ຊົງຮັບກຽດຕິຍົດ ເພາະບຸດ
ມະນຸດ ພຣະເຈົ້າ ຈະຊົງປະທານໃຫ້ບຸດມະນຸດມີກຽດຕິຍົດຮ່ວມກັບພຣະອົງ ແລະຈະຊົງໃຫ້ມີ
ກຽດຕິຍົດໃນບັດນີ້. 33ລູກນ້ອຍທັງຫລາຍເອີຍ, ເຮົາຍັງຈະຢູ່ກັບພວກເຈົ້າອີກໜ້ອຍໜຶ່ງ ພວກ
ເຈົ້າຈະຊອກຫາເຮົາ ແລະ, ເໝືອນກັບເຮົາໄດ້ບອກກັບພວກຢິວ ແລ້ວວ່າ 'ບ່ອນເຮົາຈະໄປນັ້ນ
ພວກເຈົ້າໄປບໍ່ໄດ້', ບັດນີ້ເຮົາກໍບອກພວກເຈົ້າເໝືອນກັນ.
34ເຮົາໃຫ້ບັນຍັດໃໝ່ໄວ້ແກ່ເຈົ້າທັງຫລາຍຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງ-

ຫລາຍມາແລ້ວຢ່າງໃດ ພວກເຈົ້າຈົ່ງຮັກກັນແລະກັນດ້ວຍຢ່າງນັ້ນ. 35ຖ້າເຈົ້າທັງຫລາຍມີຄວາມ
ຮັກເຊິ່ງກັນແລະກັນ ດັ່ງນີ້ແຫລະ, ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫລາຍເປັນສາວົກຂອງ
ເຮົາ."

## ຊົງທຳນວາຍວ່າເປໂຕຈະປະຕິເສດພຣະອົງ

*(ມທ 23:31-35; ມຣກ 14:27-31; ລກ 22:31-34)*

36ຝ່າຍຊີໂມນເປໂຕໄດ້ທູນພຣະອົງວ່າ, "ນາຍເຈົ້າເອີຍ, ທ່ານຈະໄປໃສ" ພຣະເຢຊູຊົງຕອບ
ວ່າ, "ບ່ອນທີ່ເຮົາຈະໄປນັ້ນ ທ່ານຈະຕາມເຮົາໄປດຽວນີ້ບໍ່ໄດ້ ແຕ່ພາຍຫລັງທ່ານຈະຕາມໄປ."
37ເປໂຕທູນພຣະອົງວ່າ, "ນາຍເຈົ້າເອີຍ, ເປັນຫຍັງຂ້ານ້ອຍຈຶ່ງຕາມທ່ານໄປດຽວນີ້ບໍ່ໄດ້ ຂ້າ-
ນ້ອຍຈະສະຫລະຊີວິດເພື່ອທ່ານ." 38ພຣະເຢຊູຊົງຕອບວ່າ, "ທ່ານຈະສະຫລະຊີວິດຂອງທ່ານ
ເພື່ອເຮົາຫລື ເຮົາບອກທ່ານຕາມຄວາມຈິງວ່າ ກ່ອນໄກ່ຈະຂັນທ່ານຈະປະຕິເສດເຮົາເຖິງສາມ
ເທື່ອ."

# ບົດທີ 14

## ພຣະເຢຊູຊົງເປັນທາງໄປສູ່ພຣະບິດາ

1"ຢ່າໃຫ້ໃຈຂອງທ່ານທັງຫລາຍວຸ້ນວາຍໄປ ຈົ່ງໄວ້ວາງໃຈໃນພຣະເຈົ້າ ແລະໄວ້ວາງໃຈໃນ
ເຮົາເໝືອນກັນ.[ກ] 2ໃນຜາສາດພຣະບິດາຂອງເຮົາມີທີ່ຢູ່ຫລາຍບ່ອນ ຖ້າບໍ່ມີເຮົາຄົງໄດ້ບອກ
ພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານທັງຫລາຍ. 3ເມື່ອເຮົາໄປຈັດແຈງ
ບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກ
ທ່ານຈະຢູ່ທີ່ນັ້ນເໝືອນກັນ. 4ແລະທ່ານຮູ້ຈັກທາງທີ່ເຮົາຈະໄປນັ້ນ."
5ໂທມາທູນພຣະອົງວ່າ, "ນາຍເຈົ້າເອີຍ, ພວກຂ້ານ້ອຍບໍ່ຮູ້ວ່າທ່ານຈະໄປໃສ ພວກຂ້ານ້ອຍ
ຈະຮູ້ຈັກທາງນັ້ນດ້ວຍຢ່າງໃດ." 6ພຣະເຢຊູຊົງຕອບລາວວ່າ, "ເຮົານີ້ແຫລະ, ເປັນທາງນັ້ນ,
ເປັນຄວາມຈິງ, ແລະ ເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກຈະມາທາງເຮົາ. 7ຖ້າ
ທ່ານທັງຫລາຍຮູ້ຈັກເຮົາແລ້ວ ທ່ານກໍຄົງຮູ້ຈັກພຣະບິດາຂອງເຮົາເໝືອນກັນ ຕັ້ງແຕ່ນີ້ໄປທ່ານ
ທັງຫລາຍກໍຮູ້ຈັກພຣະອົງ ແລະໄດ້ເຫັນພຣະອົງ."
8ຟີລິບທູນພຣະອົງວ່າ, "ນາຍເຈົ້າເອີຍ, ຂໍສະແດງພຣະບິດາໃຫ້ຂ້ານ້ອຍທັງຫລາຍໄດ້ເຫັນ
ພວກຂ້ານ້ອຍກໍຈະພໍໃຈແລ້ວ." 9ພຣະເຢຊູຊົງຕອບວ່າ, "ຟີລິບເອີຍ, ເຮົາໄດ້ຢູ່ກັບພວກທ່ານ
ເຫິງມາເຖິງພຽງນີ້ ແລະພວກທ່ານຍັງບໍ່ຮູ້ຈັກເຮົາອີກຫລື ຜູ້ທີ່ໄດ້ເຫັນເຮົາກໍໄດ້ເຫັນພຣະບິດາ
ເປັນສັນໃດທ່ານຈຶ່ງກ່າວວ່າ, 'ຂໍສະແດງພຣະບິດາໃຫ້ພວກຂ້ານ້ອຍເຫັນ.' 10ທ່ານບໍ່ເຊື່ອຫລືວ່າ
ເຮົານີ້ຢູ່ໃນພຣະບິດາ ແລະພຣະບິດາຊົງຢູ່ໃນເຮົາ ຖ້ອຍຄຳທີ່ເຮົາກ່າວແກ່ທ່ານທັງຫລາຍນັ້ນ
ເຮົາບໍ່ໄດ້ກ່າວໂດຍລຳພັງເຮົາເອງ ແຕ່ພຣະບິດາຜູ້ຊົງສະຖິດຢູ່ໃນເຮົາໄດ້ຊົງກະທຳພຣະລາຊະ-
ກິດຂອງພຣະອົງ. 11ຈົ່ງເຊື່ອເຮົາວ່າເຮົາຢູ່ໃນພຣະບິດາແລະພຣະບິດາຊົງຢູ່ໃນເຮົາ ຖ້າບໍ່ດັ່ງ-
ນັ້ນກໍຈົ່ງເຊື່ອເພາະກິດຈະການເຫລົ່ານັ້ນ. 12"ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຜູ້ທີ່

[ກ]ຫລືວ່າ "ທ່ານທັງຫລາຍກໍໄວ້ວາງໃຈໃນພຣະເຈົ້າ ຈົ່ງໄວ້ວາງໃຈໃນເຮົາເໝືອນກັນ."

ເຊື່ອໃນເຮົາກໍຈະເຮັດກິດຈະການທີ່ເຮົາເຮັດຢູ່ນັ້ນເໝືອນກັນ ແລະຜູ້ນັ້ນຈະເຮັດການໃຫຍ່ກວ່າ
ນັ້ນອີກ ເພາະວ່າຝ່າຍເຮົາໄປເຖິງພຣະບິດາ. 13ສິ່ງໃດທີ່ທ່ານທັງຫລາຍຈະຂໍໃນນາມຂອງເຮົາ
ເຮົາກໍຈະເຮັດສິ່ງນັ້ນເພື່ອວ່າພຣະບິດາຈະຊົງຮັບກຽດຕິຍົດດ້ວຍພຣະບຸດ. 14ຖ້າທ່ານທັງຫລາຍ
ຂໍສິ່ງໃດກັບເຮົາໃນນາມຂອງເຮົາ ຝ່າຍເຮົາກໍຈະເຮັດສິ່ງນັ້ນ.

## ຊົງສັນຍາຈະປະທານພຣະວິນຍານບໍລິສຸດ

15"ຖ້າທ່ານທັງຫລາຍຮັກເຮົາ ທ່ານກໍຈະຖືຮັກສາຂໍ້ບັນຍັດຂອງເຮົາ. 16ຝ່າຍເຮົາຈະທູນຂໍ
ພຣະບິດາ ແລະພຣະອົງຈະຊົງປະທານຜູ້ຊ່ອຍອີກຜູ້ໜຶ່ງໃຫ້ແກ່ພວກທ່ານ ເພື່ອຈະຢູ່ກັບພວກ
ທ່ານຕະຫລອດໄປເປັນນິດ, 17ຄືພຣະວິນຍານແຫ່ງຄວາມຈິງ ຊຶ່ງໂລກບໍ່ອາດຈະຮັບໄດ້ເພາະ
ໂລກບໍ່ເຫັນແລະບໍ່ຮູ້ຈັກພຣະອົງ ແຕ່ທ່ານທັງຫລາຍຮູ້ຈັກພຣະອົງ ເພາະພຣະອົງຊົງສະຖິດຢູ່ກັບ
ພວກທ່ານ ແລະຈະປະທັບຢູ່ໃນພວກທ່ານ.

18"ເຮົາຈະບໍ່ປະຖິ້ມທ່ານທັງຫລາຍໄວ້ໃນເປັນກຳພ້າ ເຮົາຈະມາຫາພວກທ່ານ. 19ອີກໜ້ອຍ
ໜຶ່ງໂລກຈະບໍ່ເຫັນເຮົາແຕ່ພວກທ່ານຈະເຫັນເຮົາ ເພາະເຮົາເປັນຢູ່ທ່ານທັງຫລາຍກໍຈະເປັນຢູ່
ເໝືອນກັນ. 20ໃນວັນນັ້ນທ່ານຈະຮູ້ວ່າເຮົາຢູ່ໃນພຣະບິດາຂອງເຮົາ ແລະພວກທ່ານຢູ່ໃນເຮົາ
ແລະເຮົາຢູ່ໃນພວກທ່ານ. 21ຜູ້ທີ່ມີຂໍ້ບັນຍັດຂອງເຮົາແລະຖືຂໍ້ບັນຍັດນັ້ນ ຜູ້ນັ້ນແຫລະ, ເປັນຜູ້ທີ່
ຮັກເຮົາ ແລ້ວຜູ້ທີ່ຮັກເຮົາພຣະບິດາຂອງເຮົາຈະຊົງຮັກຜູ້ນັ້ນ ແລະຝ່າຍເຮົາຈະຮັກຜູ້ນັ້ນ ພ້ອມ
ທັງຈະສະແດງຕົວເຮົາໃຫ້ແກ່ຜູ້ນັ້ນ."

22ຢູດາ (ບໍ່ແມ່ນອິສະກາຣິອົດ) ທູນພຣະອົງວ່າ, "ນາຍເຈົ້າເອີຍ, ເປັນດ້ວຍເຫດໃດທ່ານຈຶ່ງ
ສະແດງຕົວໃຫ້ປະກົດແກ່ພວກຂ້ານ້ອຍ ແຕ່ບໍ່ໃຫ້ປະກົດແກ່ໂລກ." 23ພຣະເຢຊູຊົງຕອບວ່າ,
"ຖ້າຜູ້ໃດຮັກເຮົາ ຜູ້ນັ້ນຈະຖືຮັກສາພຣະທຳຂອງເຮົາ ແລະພຣະບິດາຂອງເຮົາຈະຊົງຮັກຜູ້ນັ້ນ
ແລ້ວເຮົາທັງສອງຈະມາຫາຜູ້ນັ້ນແລະຈະຕັ້ງຢູ່ກັບຜູ້ນັ້ນ. 24ຜູ້ທີ່ບໍ່ຮັກເຮົາກໍບໍ່ຖືຮັກສາຖ້ອຍຄຳ
ທັງຫລາຍຂອງເຮົາ ພຣະທຳທີ່ທ່ານທັງຫລາຍໄດ້ຍິນນັ້ນບໍ່ແມ່ນຂອງເຮົາ ແຕ່ແມ່ນຂອງພຣະບິ-
ດາຜູ້ຊົງໃຊ້ເຮົາມາ.

25"ຂໍ້ຄວາມເຫລົ່ານີ້ເຮົາໄດ້ກ່າວຕໍ່ທ່ານທັງຫລາຍ ເມື່ອເຮົາຍັງຢູ່ກັບພວກທ່ານ. 26ແຕ່ພຣະຜູ້-
ຊ່ອຍຄືພຣະວິນຍານບໍລິສຸດທີ່ພຣະບິດາຈະຊົງໃຊ້ມາໃນນາມຂອງເຮົາ ອົງນັ້ນແຫລະ, ຈະຊົງ
ສອນທ່ານທັງຫລາຍທຸກໆ ສິ່ງ ແລະຈະເຕືອນພວກທ່ານໃຫ້ລະນຶກເຖິງທຸກສິ່ງທີ່ເຮົານີ້ໄດ້ກ່າວ
ແກ່ພວກທ່ານແລ້ວນັ້ນ.

27ເຮົາມອບຄວາມສະຫງົບສຸກໄວ້ກັບທ່ານທັງຫລາຍ ຄວາມສະຫງົບສຸກຂອງເຮົາ ເຮົາປະ-
ທານໃຫ້ແກ່ທ່ານທັງຫລາຍ ຝ່າຍເຮົາໃຫ້ແກ່ພວກທ່ານບໍ່ເໝືອນໂລກໃຫ້ນັ້ນ ຢ່າໃຫ້ໃຈຂອງພວກ
ທ່ານວຸ້ນວາຍໄປແລະຢ່າຊູ່ຢ້ານ. 28ທ່ານທັງຫລາຍໄດ້ຍິນເຮົາກ່າວແກ່ພວກທ່ານແລ້ວວ່າ 'ເຮົາ
ຈະຈາກໄປແລະຈະກັບມາຫາພວກທ່ານ' ຖ້າພວກທ່ານຮັກເຮົາ ພວກທ່ານກໍຈະຊົມຊື່ນຍິນດີທີ່
ເຮົາໄປຫາພຣະບິດາ ເພາະພຣະບິດາຊົງເປັນໃຫຍ່ກວ່າເຮົາ. 29ບັດນີ້ເຮົາໄດ້ບອກທ່ານທັງ-
ຫລາຍກ່ອນເຫດການນັ້ນຈະເກີດຂຶ້ນ ເພື່ອວ່າເມື່ອເຫດການນັ້ນເກີດຂຶ້ນແລ້ວພວກທ່ານຈະໄດ້
ເຊື່ອ. 30ຕັ້ງແຕ່ນີ້ໄປເຮົາຈະບໍ່ສົນທະນາຫລາຍຄຳກັບພວກທ່ານ ເພາະວ່າຜູ້ປົກຄອງໂລກຈະມາ

ແລະຜູ້ນັ້ນບໍ່ມີສິດອັນໃດກ່ຽວກັບເຮົາ. [31]ແຕ່ເຮົາໄດ້ເຮັດຕາມທີ່ພຣະບິດາໄດ້ຊົງບັນຊາ ເພື່ອ
ໂລກຈະໄດ້ຮູ້ວ່າເຮົາຮັກພຣະບິດາ ຈົ່ງລຸກຂຶ້ນ, ເຮົາທັງຫລາຍພາກັນຈາກທີ່ນັ້ນໄປເທາະ.”

# ບົດທີ 15

## ພຣະເຢຊູຄືເຄືອອະງຸ່ນອັນແທ້ຈິງ

[1]“ເຮົາເປັນເຄືອອະງຸ່ນອັນແທ້ຈິງ ພຣະບິດາຂອງເຮົາຊົງເປັນຜູ້ບົວລະບັດ. [2]ກິ່ງທຸກກິ່ງໃນ
ເຮົາທີ່ບໍ່ເກີດຜົນ ພຣະອົງຊົງລິເສຍ ແລະກິ່ງທຸກກິ່ງທີ່ເກີດຜົນ ພຣະອົງຊົງຕອນເພື່ອໃຫ້ເກີດຜົນ
ຫລາຍຂຶ້ນ. [3]ບັດນີ້ທ່ານທັງຫລາຍກໍຕອນ[ກ] ແລ້ວດ້ວຍພຣະທຳທີ່ເຮົາໄດ້ກ່າວຕໍ່ພວກທ່ານ. [4]ຈົ່ງ
ເຂົ້າສະໜິດຢູ່ໃນເຮົາແລະເຮົາເຂົ້າສະໜິດຢູ່ໃນພວກທ່ານ ກິ່ງຈະເກີດຜົນເອງບໍ່ໄດ້ນອກຈາກຈະ
ຕິດຢູ່ກັບເຄືອສັນໃດ ທ່ານທັງຫລາຍກໍຈະເກີດຜົນບໍ່ໄດ້ນອກຈາກຈະເຂົ້າສະໜິດຢູ່ໃນເຮົາສັນ-
ນັ້ນ.

[5]ເຮົາເປັນເຄືອອະງຸ່ນ ທ່ານທັງຫລາຍເປັນກິ່ງ ຜູ້ທີ່ເຂົ້າສະໜິດຢູ່ໃນເຮົາ ແລະເຮົາເຂົ້າສະ-
ໜິດຢູ່ໃນຜູ້ນັ້ນ ແມ່ນຜູ້ນັ້ນແຫລະ, ຈະເກີດຜົນຫລາຍ ເພາະຖ້າແຍກຈາກເຮົາແລ້ວພວກທ່ານບໍ່
ອາດເຮັດສິ່ງໃດໄດ້. [6]ຖ້າຜູ້ໃດບໍ່ເຂົ້າສະໜິດຢູ່ໃນເຮົາ ຜູ້ນັ້ນກໍຕ້ອງຖືກຕັດຖິ້ມເສຍເໝືອນກິ່ງ
ແລ້ວກໍຫ່ຽວແຫ້ງໄປແລະຖືກເກັບເອົາໄປເຜົາໄຟເສຍ. [7]ຖ້າທ່ານທັງຫລາຍເຂົ້າສະໜິດຢູ່ໃນເຮົາ
ແລະຖ້ອຍຄຳຂອງເຮົາຝັງຢູ່ໃນທ່ານແລ້ວ ພວກທ່ານຈະປາດຖະໜາສິ່ງໃດຈົ່ງຂໍແລ້ວສິ່ງນັ້ນຈະ
ເກີດມີແກ່ພວກທ່ານ. [8]ໃນການນີ້ແຫລະ, ພຣະບິດາຂອງເຮົາໄດ້ຊົງຮັບກຽດຕິຍົດ ຄືເມື່ອພວກ
ທ່ານເກີດຜົນຫລາຍ ພວກທ່ານຈຶ່ງເກີດເປັນສາວົກຂອງເຮົາ.

[9]ພຣະບິດາໄດ້ຊົງຮັກເຮົາຢ່າງໃດ ຝ່າຍເຮົາໄດ້ຮັກພວກທ່ານຢ່າງນັ້ນເໝືອນກັນ ຈົ່ງຕັ້ງຢູ່ໃນ
ຄວາມຮັກຂອງເຮົາ. [10]ຖ້າພວກທ່ານຖືຮັກສາຂໍ້ບັນຍັດຂອງເຮົາ ທ່ານກໍຈະຕັ້ງຢູ່ໃນຄວາມຮັກ
ຂອງເຮົາ ເໝືອນດັ່ງເຮົາໄດ້ຖືຮັກສາບັນຍັດພຣະບິດາຂອງເຮົາ ເຮົາຈຶ່ງຕັ້ງຢູ່ໃນຄວາມຮັກຂອງ
ພຣະອົງ. [11]ຂໍ້ຄວາມເຫລົ່ານີ້ເຮົາໄດ້ບອກທ່ານທັງຫລາຍແລ້ວ ເພື່ອຄວາມຍິນດີຂອງເຮົາຈະຢູ່
ໃນທ່ານ ແລະຄວາມຍິນດີຂອງທ່ານຈະຄົບບໍລິບູນ. [12]“ນີ້ແຫລະ, ເປັນຂໍ້ບັນຍັດຂອງເຮົາ ຄືໃຫ້
ທ່ານທັງຫລາຍຮັກກັນແລະກັນ ເໝືອນດັ່ງເຮົາໄດ້ຮັກພວກທ່ານ. [13]ບໍ່ມີຜູ້ໃດມີຄວາມຮັກໃຫຍ່
ກວ່ານີ້ ຄືການທີ່ຜູ້ໜຶ່ງຈະໄດ້ສະຫລະຊີວິດຕາງມິດສະຫາຍຂອງຕົນ. [14]ຖ້າທ່ານທັງຫລາຍເຮັດ
ຂໍ້ທີ່ເຮົາໄດ້ບັນຍັດໄວ້ ພວກທ່ານກໍເປັນມິດສະຫາຍຂອງເຮົາ. [15]ຕໍ່ໄປເຮົາບໍ່ເອີ້ນທ່ານທັງຫລາຍ
ວ່າຂ້ອຍໃຊ້ ເພາະຂ້ອຍໃຊ້ບໍ່ຮູ້ວ່ານາຍຂອງຕົນກຳລັງເຮັດອັນໃດ ແຕ່ເຮົາເອີ້ນພວກທ່ານວ່າມິດ
ສະຫາຍ ເພາະວ່າທຸກສິ່ງທີ່ເຮົາໄດ້ຍິນຈາກພຣະບິດາຂອງເຮົາ ເຮົາກໍໄດ້ສະແດງໃຫ້ແກ່ພວກ
ທ່ານຊາບແລ້ວ. [16]ບໍ່ແມ່ນທ່ານທັງຫລາຍໄດ້ເລືອກເອົາເຮົາ ແຕ່ຝ່າຍເຮົາໄດ້ເລືອກເອົາພວກ
ທ່ານແລະໄດ້ແຕ່ງຕັ້ງທ່ານທັງຫລາຍ ເພື່ອໃຫ້ໄປເກີດຜົນ ແລະເພື່ອຜົນຂອງພວກທ່ານຈະຕັ້ງຢູ່
ຖາວອນ ເພື່ອວ່າ, ເມື່ອທ່ານທັງຫລາຍຈະທູນຂໍສິ່ງໃດຈາກພຣະບິດາໃນນາມຂອງເຮົາ ພຣະ-
ອົງກໍຈະຊົງປະທານສິ່ງນັ້ນແກ່ພວກທ່ານ. [17]ຂໍ້ຄວາມເຫລົ່ານີ້ເຮົາກໍບັນຍັດໄວ້ແກ່ທ່ານທັງຫລາຍ

[ກ]ຄຳວ່າຕອນນີ້ໝາຍຄວາມວ່າ “ຮັບການຊຳຮະໃຫ້ສະອາດ.”

ເພື່ອພວກທ່ານຈະຮັກກັນແລະກັນ.

## ຄວາມກຽດຊັງຂອງໂລກ

[18]“ຖ້າໂລກຫາກກຽດຊັງທ່ານທັງຫລາຍ ກໍຈົ່ງຮູ້ວ່າມັນໄດ້ກຽດຊັງເຮົາກ່ອນແລ້ວ. [19]ຖ້າທ່ານ
ທັງຫລາຍເປັນຂອງຝ່າຍໂລກ ໂລກກໍຈະຮັກແພງສິ່ງທີ່ເປັນຂອງມັນ ແຕ່ເພາະທ່ານທັງຫລາຍບໍ່
ເປັນຂອງຝ່າຍໂລກ ແລະຝ່າຍເຮົາໄດ້ເລືອກເອົາພວກທ່ານອອກຈາກໂລກ ສັນນັ້ນໂລກຈຶ່ງກຽດ
ຊັງພວກທ່ານ. [20]ຈົ່ງລະນຶກເຖິງຄຳທີ່ເຮົາໄດ້ກ່າວແກ່ທ່ານທັງຫລາຍວ່າ ຂ້ອຍໃຊ້ບໍ່ຫ່ອນໃຫຍ່
ກວ່ານາຍຂອງຕົນ ຖ້າເຂົາຂົ່ມເຫງເຮົາ ເຂົາກໍຈະຂົ່ມເຫງທ່ານທັງຫລາຍເໝືອນກັນ ຖ້າເຂົາຖື
ຮັກສາຂໍ້ຄວາມຂອງເຮົາ ເຂົາກໍຈະຖືຮັກສາຂໍ້ຄວາມຂອງພວກທ່ານເໝືອນກັນ. [21]ແຕ່ສິ່ງທັງ
ປວງນີ້ເຂົາກໍຈະເຮັດຕໍ່ທ່ານທັງຫລາຍ ເພາະເຫັນແກ່ນາມຂອງເຮົາ ເພາະວ່າເຂົາບໍ່ຮູ້ຈັກພຣະອົງ
ຜູ້ຊົງໃຊ້ເຮົາມາ. [22]ຖ້າເຮົາບໍ່ໄດ້ມາກ່າວແກ່ເຂົາ ເຂົາກໍບໍ່ມີຜິດບາບແຕ່ບັດນີ້ເຂົາບໍ່ມີຂໍ້ແກ້ຕົວໃນ
ເລື່ອງຜິດບາບຂອງຕົນ. [23]ຜູ້ທີ່ກຽດຊັງເຮົາກໍກຽດຊັງພຣະບິດາຂອງເຮົາເໝືອນກັນ. [24]ຖ້າເຮົາບໍ່
ໄດ້ເຮັດກິດຈະການຖ້າມກາງເຂົາ ອັນບໍ່ມີຜູ້ອື່ນໄດ້ເຮັດນັ້ນ ເຂົາກໍຄົງບໍ່ມີຜິດບາບ ແຕ່ບັດນີ້ເຂົາ
ໄດ້ເຫັນ ແລະໄດ້ກຽດຊັງທັງເຮົາ ແລະພຣະບິດາຂອງເຮົາເໝືອນກັນ. [25]ທັງນີ້ກໍເພື່ອຈະໄດ້
ເປັນຈິງ ຕາມທີ່ຂຽນໄວ້ໃນພຣະບັນຍັດຂອງເຂົາທີ່ວ່າ ‘ເຂົາໄດ້ກຽດຊັງເຮົາໂດຍບໍ່ມີເຫດ’. [26]ແຕ່
ເມື່ອອົງພຣະຜູ້ຊ່ອຍຜູ້ທີ່ເຮົານີ້ຈະໃຊ້ມາຈາກພຣະບິດາຫາທ່ານທັງຫລາຍ ຄືພຣະວິນຍານ
ແຫ່ງຄວາມຈິງຊຶ່ງອອກຈາກພຣະບິດາ ໄດ້ສະເດັດມາແລ້ວ ພຣະອົງນັ້ນແຫລະ, ຈະຊົງເປັນ
ພະຍານໃຫ້ແກ່ເຮົາ. [27]ສ່ວນທ່ານທັງຫລາຍກໍເປັນພະຍານເໝືອນກັນ ເພາະວ່າພວກທ່ານຢູ່ກັບ
ເຮົາຕັ້ງແຕ່ຕົ້ນມາແລ້ວ.

# ບົດທີ 16

[1]“ຂໍ້ຄວາມເຫລົ່ານີ້ເຮົາໄດ້ບອກທ່ານທັງຫລາຍແລ້ວ ເພື່ອບໍ່ໃຫ້ພວກທ່ານເກີດຄວາມສະດຸດ
ໃຈ. [2]ເຂົາຈະໄລ່ທ່ານທັງຫລາຍອອກຈາກໂຮງທຳມະເທດສະໜາຈະມີເວລາໜຶ່ງເມື່ອບຸກຄົນທີ່
ຂ້າພວກທ່ານເສຍຈະຄຶດວ່າ ຕົນເຮັດການນັ້ນເພື່ອບູຊາຕໍ່ພຣະເຈົ້າ. [3]ເຂົາຈະເຮັດດັ່ງນັ້ນ ເພາະ
ເຂົາບໍ່ໄດ້ຮູ້ຈັກພຣະບິດາແລະບໍ່ໄດ້ຮູ້ຈັກເຮົາ. [4]ແຕ່ທີ່ເຮົາໄດ້ບອກສິ່ງເຫລົ່ານີ້ໃຫ້ທ່ານທັງຫລາຍ
ກໍເພື່ອວ່າ, ເມື່ອເວລາຂອງເຂົາມາເຖິງແລ້ວ ພວກທ່ານຈະໄດ້ລະນຶກວ່າ ຝ່າຍເຮົາໄດ້ບອກພວກ
ທ່ານໄວ້ແລ້ວ.

## ງານຂອງພຣະວິນຍານບໍລິສຸດ

“ເຮົາບໍ່ໄດ້ບອກສິ່ງເຫລົ່ານີ້ແກ່ທ່ານທັງຫລາຍຕັ້ງແຕ່ຕົ້ນມາ ເພາະວ່າເຮົາຍັງຢູ່ກັບພວກທ່ານ.
[5]ແຕ່ບັດນີ້ເຮົາຈວນຈະໄປຫາພຣະອົງຜູ້ຊົງໃຊ້ເຮົາມາ ແລະບໍ່ມີຜູ້ໃດໃນພວກທ່ານຖາມເຮົາວ່າ,
‘ທ່ານຈະໄປໃສ’. [6]ແຕ່ເພາະເຮົາໄດ້ບອກສິ່ງເຫລົ່ານີ້ຕໍ່ພວກທ່ານ ໃຈຂອງພວກທ່ານຈຶ່ງເຕັມໄປ
ດ້ວຍຄວາມທຸກ. [7]ຢ່າງໃດກໍຕາມ, ເຮົາກໍບອກຄວາມຈິງຕໍ່ທ່ານທັງຫລາຍວ່າ ການທີ່ເຮົາຈາກ
ໄປນັ້ນເປັນປະໂຫຍດແກ່ພວກທ່ານ ເພາະຖ້າເຮົາບໍ່ໄປ ອົງພຣະຜູ້ຊ່ອຍນັ້ນຈະບໍ່ໄດ້ສະເດັດມາ
ຫາພວກທ່ານ ແຕ່ຖ້າເຮົາໄປແລ້ວ ເຮົາກໍຈະໃຊ້ ພຣະອົງນັ້ນມາຫາພວກທ່ານ. [8]ເມື່ອພຣະອົງ

ສະເດັດມາແລ້ວ ພຣະອົງນັ້ນແຫລະ, ຈະຊົງບັນດົນໃຫ້ໂລກຮູ້ແຈ້ງໃນເລື່ອງຄວາມຜິດບາບ,
ຄວາມຊອບທຳ, ແລະການພິພາກສາ. 9ໃນເລື່ອງຄວາມຜິດບາບນັ້ນ ຄືເພາະເຂົາບໍ່ວາງໃຈເຊື່ອ
ໃນເຮົາ. 10ໃນເລື່ອງຄວາມຊອບທຳນັ້ນ ຄືເພາະເຮົາໄປຫາ ພຣະບິດາ ແລະພວກທ່ານຈະບໍ່ເຫັນ
ເຮົາອີກ. 11ສ່ວນເລື່ອງການພິພາກສານັ້ນ ຄືເພາະຜູ້ປົກຄອງໂລກນີ້ໄດ້ຖືກພິພາກສາແລ້ວ.

12"ເຮົາຍັງມີອີກຫລາຍສິ່ງທີ່ຈະບອກແກ່ທ່ານທັງຫລາຍ ແຕ່ດຽວນີ້ພວກທ່ານບໍ່ອາດຈະທົນ
ໄດ້. 13ແຕ່ເມື່ອພຣະອົງນັ້ນຄື ພຣະວິນຍານ ແຫ່ງຄວາມຈິງຈະສະເດັດມາແລ້ວ ພຣະອົງຈະນຳ
ທ່ານທັງຫລາຍໄປສູ່ຄວາມຈິງທັງໝົດ ເພາະພຣະອົງຈະບໍ່ກ່າວແຕ່ລຳພັງຂອງພຣະອົງເອງ ແຕ່
ພຣະອົງຊົງໄດ້ຍິນສິ່ງໃດກໍຈະຊົງກ່າວສິ່ງນັ້ນ ແລະຈະຊົງປະກາດໃຫ້ທ່ານທັງຫລາຍຮູ້ເຖິງສິ່ງ
ເຫລົ່ານີ້ທີ່ຈະເກີດຂຶ້ນ. 14ພຣະອົງຈະຊົງໃຫ້ເຮົາໄດ້ຮັບກຽດ ເພາະວ່າພຣະອົງຈະຊົງເອົາສິ່ງທີ່
ເປັນຂອງເຮົາມາປະກາດແກ່ທ່ານທັງຫລາຍ. 15ທຸກໆ ສິ່ງທີ່ ພຣະບິດາ ຊົງມີຢູ່ນັ້ນກໍເປັນຂອງ
ເຮົາ ເຫດສັນນັ້ນເຮົາຈຶ່ງກ່າວວ່າ ພຣະວິນຍານ ຊົງເອົາສິ່ງຊຶ່ງເປັນຂອງເຮົານັ້ນມາປະກາດແກ່
ທ່ານທັງຫລາຍ.

## ຄວາມທຸກໂສກຈະກາຍເປັນຄວາມຊົມຊື່ນຍິນດີ

16"ຍັງໜ້ອຍໜຶ່ງທ່ານທັງຫລາຍຈະບໍ່ເຫັນເຮົາຕໍ່ໄປ ແລະຍັງອີກໜ້ອຍໜຶ່ງພວກທ່ານກໍຈະເຫັນ
ເຮົາ."

17ສາວົກຂອງພຣະອົງລາງຄົນຈຶ່ງຖາມກັນວ່າ, "ທີ່ທ່ານໄດ້ກ່າວຕໍ່ພວກເຮົາວ່າ 'ຍັງໜ້ອຍໜຶ່ງ
ທ່ານທັງຫລາຍຈະບໍ່ເຫັນເຮົາ ແລະຍັງອີກໜ້ອຍໜຶ່ງພວກທ່ານກໍຈະເຫັນເຮົາ ແລະ 'ເພາະເຮົາ
ໄປຫາ ພຣະບິດາ' ນີ້ໝາຍຄວາມຢ່າງໃດ." 18ເຂົາຈຶ່ງເວົ້າກັນວ່າ, "ຍັງໜ້ອຍໜຶ່ງ ນັ້ນໝາຍ
ຄວາມວ່າຢ່າງໃດ ພວກເຮົາບໍ່ເຂົ້າໃຈວ່າທ່ານກຳລັງເວົ້າຫຍັງ."

19ພຣະເຢຊູ ຊົງຊາບວ່າເຂົາຢາກທູນຖາມພຣະອົງ ພຣະອົງຈຶ່ງຊົງກ່າວກັບເຂົາວ່າ, "ທ່ານ
ທັງຫລາຍຖາມກັນໃນເລື່ອງທີ່ເຮົາກ່າວນັ້ນຫລືວ່າ 'ຍັງໜ້ອຍໜຶ່ງທ່ານທັງຫລາຍຈະບໍ່ເຫັນເຮົາ'
ແລະ 'ອີກໜ້ອຍໜຶ່ງພວກທ່ານກໍຈະເຫັນເຮົາ'. 20ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ
ທ່ານທັງຫລາຍຈະຮ້ອງໄຫ້ຮ່ຳໄຮ ແຕ່ໂລກນີ້ຈະຊົມຊື່ນຍິນດີ ສ່ວນພວກທ່ານຈະມີຄວາມທຸກ
ໂສກ ແຕ່ຄວາມທຸກໂສກຂອງພວກທ່ານນັ້ນຈະກັບກາຍເປັນຄວາມຍິນດີ. 21ເມື່ອຜູ້ຍິງຈະເກີດ
ລູກ ນາງກໍມີຄວາມທຸກເພາະເຖິງກຳນົດແລ້ວ ແຕ່ເມື່ອເກີດລູກແລ້ວນາງກໍບໍ່ຄຶດເຖິງຄວາມເຈັບ
ປວດນັ້ນອີກ ເພາະມີຄວາມຊົມຊື່ນຍິນດີທີ່ຄົນຜູ້ໜຶ່ງເກີດມາໃນໂລກ. 22ດັ່ງນັ້ນໃນບັດນີ້ທ່ານທັງ-
ຫລາຍກໍມີຄວາມທຸກໂສກ ແຕ່ເຮົາຈະເຫັນພວກທ່ານອີກ ແລະໃຈຂອງພວກທ່ານຈະຊົມຊື່ນຍິນ-
ດີ ແລະບໍ່ມີຜູ້ໃດຈະເອົາຄວາມຍິນດີນັ້ນອອກໄປຈາກພວກທ່ານໄດ້. 23ໃນວັນນັ້ນທ່ານທັງຫລາຍ
ຈະບໍ່ຖາມເຮົາເຖິງສິ່ງໃດ ເຮົາບອກພວກທ່ານຕາມຄວາມຈິງວ່າ ຖ້າພວກທ່ານຈະຂໍສິ່ງໃດຈາກ
ພຣະບິດາ ໃນນາມຂອງເຮົາ ພຣະອົງຈະຊົງໂຜດປະທານສິ່ງນັ້ນໃຫ້ແກ່ທ່ານ. 24ມາເຖິງບັດນີ້
ທ່ານທັງຫລາຍບໍ່ໄດ້ຂໍສິ່ງໃດໃນນາມຂອງເຮົາ ຈົ່ງຂໍແລ້ວພວກທ່ານຈະໄດ້ຮັບ ເພື່ອຄວາມຍິນດີ
ຂອງພວກທ່ານຈະເຕັມບໍລິບູນ.

## ເຮົາໄດ້ຊະນະໂລກແລ້ວ

25“ສິ່ງເຫລົ່ານີ້ເຮົາໄດ້ກ່າວຕໍ່ທ່ານທັງຫລາຍ ເປັນຄຳປຽບທຽບ ເມື່ອເຖິງເວລາໜຶ່ງເຮົາຈະບໍ່
ກ່າວເປັນຄຳປຽບທຽບຕໍ່ພວກທ່ານອີກ ແຕ່ຈະບອກໃຫ້ພວກທ່ານຮູ້ເລື່ອງ ພຣະບິດາ ໂດຍແຈ່ມ
ແຈ້ງ. 26ໃນວັນນັ້ນທ່ານທັງຫລາຍຈະທູນຂໍໃນນາມຂອງເຮົາ ແລະເຮົາຈະບໍ່ບອກພວກທ່ານວ່າ
ເຮົາຈະອ້ອນວອນ ພຣະບິດາ ເພື່ອພວກທ່ານ. 27ດ້ວຍວ່າ ພຣະບິດາ ເອງກໍຊົງຮັກແພງທ່ານທັງ-
ຫລາຍ ເພາະວ່າພວກທ່ານໄດ້ຮັກແພງເຮົາ ແລະໄດ້ເຊື່ອວ່າ ເຮົາອອກມາຈາກ ພຣະເຈົ້າ.
28ເຮົາໄດ້ອອກມາຈາກ ພຣະບິດາ ແລະໄດ້ມາໃນໂລກ ແລ້ວເຮົາຈະຈາກໂລກໄປຫາ ພຣະບິດາ
ອີກ.”

29ພວກສາວົກຂອງພຣະອົງໄດ້ທູນວ່າ, “ນີ້ແຫລະ, ບັດນີ້ທ່ານກ່າວໂດຍແຈ່ມແຈ້ງ ບໍ່ໄດ້ກ່າວ
ເປັນຄຳປຽບທຽບ. 30ບັດນີ້ພວກຂ້ານ້ອຍຮູ້ແລ້ວວ່າທ່ານຮູ້ຈັກສັບພະທຸກສິ່ງ ແລະບໍ່ຈຳເປັນທີ່ຜູ້
ໃດຈະຖາມທ່ານອີກ ດ້ວຍເຫດນີ້ພວກຂ້ານ້ອຍຈຶ່ງເຊື່ອວ່າທ່ານມາຈາກ ພຣະເຈົ້າ.”

31ພຣະເຢຊູ ຊົງຕອບເຂົາວ່າ, “ດຽວນີ້ທ່ານທັງຫລາຍເຊື່ອແລ້ວຫລື. 32ເບິ່ງແມ, ເວລາຈະມາ
ແລະເວລານັ້ນກໍເຖິງແລ້ວ ທີ່ທ່ານທັງຫລາຍຈະຕ້ອງແຕກຊະກັນໄປບ້ານໃຜເຮືອນມັນ ແລະຈະ
ປະເຮົາໄວ້ຜູ້ດຽວ ແຕ່ຫາກວ່າເຮົາບໍ່ໄດ້ຢູ່ຜູ້ດຽວ ເພາະ ພຣະບິດາ ຊົງສະຖິດຢູ່ກັບເຮົາ. 33ເຮົາໄດ້
ບອກເລື່ອງນີ້ແກ່ທ່ານທັງຫລາຍ ເພື່ອພວກທ່ານຈະມີຄວາມສະຫງົບສຸກໃນເຮົາ ໃນໂລກນີ້ພວກ
ທ່ານຈະມີຄວາມທຸກລຳບາກ ແຕ່ຈົ່ງຊື່ນໃຈເທາະ ຝ່າຍເຮົາໄດ້ຊະນະໂລກແລ້ວ.”

# ບົດທີ 17

## ພຣະເຢຊູຊົງອ້ອນວອນເພື່ອພວກສາວົກ

1ເມື່ອ ພຣະເຢຊູ ຊົງກ່າວຖ້ອຍຄຳເຫລົ່ານີ້ແລ້ວ ພຣະອົງກໍຊົງເງີຍພຣະພັກຂຶ້ນເບິ່ງຟ້າໂດຍຊົງ
ກ່າວວ່າ, “ພຣະບິດາ ເອີຍ, ເຖິງເວລາແລ້ວ ຂໍຊົງໂຜດໃຫ້ ພຣະບຸດ ຂອງພຣະອົງໄດ້ຮັບກຽດຕິ-
ຍົດ ເພື່ອ ພຣະບຸດ ຈະໄດ້ຖວາຍກຽດຕິຍົດແດ່ພຣະອົງ. 2ເໝືອນດັ່ງພຣະອົງໄດ້ຊົງປະທານໃຫ້
ພຣະບຸດ ມີສິດອຳນາດເໜືອມະນຸດທັງປວງ ເພື່ອໃຫ້ ພຣະບຸດ ປະທານຊີວິດອັນຕະຫລອດໄປ
ເປັນນິດ ແກ່ທຸກຄົນທີ່ພຣະອົງໄດ້ຊົງມອບໃຫ້ແກ່ ພຣະບຸດ ນັ້ນ. 3ນີ້ແຫລະ, ແມ່ນຊີວິດອັນຕະ-
ຫລອດໄປເປັນນິດ ຄືທີ່ເຂົາຮູ້ຈັກພຣະອົງຜູ້ຊົງເປັນ ພຣະເຈົ້າ ທ່ຽງແທ້ອົງດຽວແລະຮູ້ຈັກ ພຣະ-
ເຢຊູຄຣິດ ທີ່ພຣະອົງຊົງໃຊ້ມາ. 4ຂ້ານ້ອຍໄດ້ຖວາຍກຽດຕິຍົດແດ່ພຣະອົງໃນໂລກ ຂ້ານ້ອຍໄດ້
ເຮັດກິດຈະການທີ່ພຣະອົງຊົງໃຫ້ຂ້ານ້ອຍເຮັດນັ້ນສຳເລັດແລ້ວ. 5ບັດນີ້ ພຣະບິດາ ເອີຍ, ຂໍຊົງ
ໂຜດໃຫ້ຂ້ານ້ອຍມີກຽດຕິຍົດຕໍ່ພຣະພັກຂອງພຣະອົງເອງ ຄືກຽດຕິຍົດທີ່ຂ້ານ້ອຍມີກັບພຣະອົງ
ກ່ອນໂລກບໍ່ທັນມີນັ້ນ.

6“ຂ້ານ້ອຍໄດ້ສະແດງພຣະນາມຂອງພຣະອົງ ແກ່ຄົນທັງຫລາຍທີ່ພຣະອົງໄດ້ຊົງປະທານໃຫ້
ແກ່ຂ້ານ້ອຍຈາກມະນຸດສະໂລກ ຄົນເຫລົ່ານັ້ນເປັນຂອງພຣະອົງແລ້ວ ແລະພຣະອົງໄດ້ຊົງປະ-
ທານເຂົາໃຫ້ແກ່ຂ້ານ້ອຍ ແລະເຂົາໄດ້ຖືຮັກສາພຣະທຳຂອງພຣະອົງແລ້ວ. 7ບັດນີ້ເຂົາຊາບ
ແລ້ວວ່າ ທຸກສິ່ງທີ່ພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍນັ້ນມາຈາກພຣະອົງ. 8ເພາະວ່າຖ້ອຍຄຳ

ທັງຫລາຍທີ່ພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍນັ້ນ ຂ້ານ້ອຍໄດ້ໃຫ້ເຂົາແລ້ວ ແລະເຂົາໄດ້ຮັບ
ໄວ້ ແລະເຂົາຮູ້ແນ່ວ່າຂ້ານ້ອຍມາຈາກພຣະອົງທັງເຊື່ອວ່າພຣະອົງໄດ້ຊົງໃຊ້ຂ້ານ້ອຍມາ. 9ຂ້າ-
ນ້ອຍອ້ອນວອນເພື່ອເຂົາ ຂ້ານ້ອຍບໍ່ໄດ້ອ້ອນວອນເພື່ອໂລກ ແຕ່ເພື່ອຄົນເຫລົ່ານັ້ນທີ່ພຣະອົງໄດ້
ຊົງປະທານແກ່ຂ້ານ້ອຍ ເພາະວ່າເຂົາເປັນຂອງພຣະອົງ. 10ທຸກສິ່ງຊຶ່ງເປັນຂອງຂ້ານ້ອຍກໍເປັນ
ຂອງພຣະອົງ ແລະທຸກສິ່ງຊຶ່ງເປັນຂອງພຣະອົງກໍເປັນຂອງຂ້ານ້ອຍ ແລະຂ້ານ້ອຍມີກຽດຕິຍົດ
ໃນສິ່ງເຫລົ່ານັ້ນ. 11ບັດນີ້ຂ້ານ້ອຍຈະບໍ່ຢູ່ໃນໂລກນີ້ອີກ ແຕ່ເຂົາຍັງຢູ່ໃນໂລກນີ້ ຝ່າຍຂ້ານ້ອຍ
ກໍາລັງຈະເມືອຫາພຣະອົງ ໂອ, ພຣະບິດາຜູ້ບໍລິສຸດ ຂໍພຣະອົງຊົງໂຜດພິທັກຮັກສາເຂົາໄວ້ໂດຍ
ພຣະນາມຂອງພຣະອົງ ທີ່ພຣະອົງໄດ້ຊົງປະທານແກ່ຂ້ານ້ອຍນັ້ນ ເພື່ອເຂົາຈະເປັນອັນໜຶ່ງອັນ
ດຽວກັນເໝືອນດັ່ງເຮົາທັງສອງ. 12ເມື່ອຂ້ານ້ອຍຍັງຢູ່ກັບເຂົາ ຂ້ານ້ອຍກໍໄດ້ພິທັກຮັກສາເຂົາໄວ້
ໂດຍພຣະນາມຂອງພຣະອົງທີ່ພຣະອົງໄດ້ຊົງປະທານແກ່ຂ້ານ້ອຍ ຂ້ານ້ອຍໄດ້ປົກປັກຮັກສາ
ເຂົາໄວ້ແລະບໍ່ມີຜູ້ໃດໄດ້ເສຍໄປ ເວັ້ນໄວ້ແຕ່ຜູ້ຖືກຊົງໝາຍໄວ້ສໍາລັບຄວາມຈິບຫາຍ ເພື່ອໃຫ້
ສໍາເລັດໄປຕາມຂໍ້ພຣະທໍາ. 13ບັດນີ້ຂ້ານ້ອຍກໍາລັງຈະເມືອຫາພຣະອົງ ຂ້ານ້ອຍກ່າວເຖິງສິ່ງ
ເຫລົ່ານີ້ໃນໂລກ ເພື່ອເຂົາຈະໄດ້ຮັບຄວາມຊົມຊື່ນຍິນດີຂອງຂ້ານ້ອຍຢ່າງບໍລິບູນ. 14ຝ່າຍຂ້າ-
ນ້ອຍໄດ້ມອບພຣະທໍາຂອງພຣະອົງໃຫ້ແກ່ເຂົາແລ້ວ ແລະໂລກນີ້ໄດ້ໄດ້ກຽດຊັງເຂົາເພາະເຂົາບໍ່
ຢູ່ຝ່າຍໂລກ ເໝືອນຂ້ານ້ອຍບໍ່ຢູ່ຝ່າຍໂລກນັ້ນ. 15ຂ້ານ້ອຍບໍ່ໄດ້ຂໍພຣະອົງເອົາເຂົາອອກຈາກ
ໂລກນີ້ ແຕ່ໄດ້ຂໍຮັກສາເຂົາໄວ້ໃຫ້ພົ້ນຈາກມານຮ້າຍ.[ກ] 16ເຂົາບໍ່ຢູ່ຝ່າຍໂລກເໝືອນດັ່ງຂ້ານ້ອຍ
ນີ້ບໍ່ຢູ່ຝ່າຍໂລກ. 17ຂໍຊົງໂຜດຊໍາລະເຂົາໃຫ້ບໍລິສຸດດ້ວຍຄວາມຈິງ ພຣະທໍາຂອງພຣະອົງນັ້ນ
ເປັນຄວາມຈິງ. 18ພຣະອົງຊົງໃຊ້ຂ້ານ້ອຍມາໃນໂລກສັນໃດ ຂ້ານ້ອຍກໍໃຊ້ເຂົາໄປໃນໂລກສັນ-
ນັ້ນ. 19ຂ້ານ້ອຍຊໍາລະຕົວຖວາຍເພາະເຫັນແກ່ເຂົາ ເພື່ອໃຫ້ເຂົາຮັບການຊົງຊໍາລະແຕ່ງຕັ້ງໄວ້
ດ້ວຍຄວາມຈິງເໝືອນກັນ.

20“ຂ້ານ້ອຍບໍ່ໄດ້ອ້ອນວອນເພື່ອຄົນເຫລົ່ານີ້ພວກດຽວ ແຕ່ເພື່ອຄົນທັງປວງທີ່ວາງໃຈໃນຂ້າ-
ນ້ອຍ ເພາະຖ້ອຍຄໍາຂອງເຂົາ, 21ເພື່ອເຂົາທັງໝົດຈະເປັນອັນໜຶ່ງອັນດຽວກັນ ດັ່ງທີ່ພຣະອົງຄື
ພຣະບິດາຊົງສະຖິດໃນຂ້ານ້ອຍ ແລະຂ້ານ້ອຍໃນພຣະອົງ ເພື່ອໃຫ້ເຂົາຢູ່ໃນເຮົາທັງສອງ
ເໝືອນກັນ ເພື່ອໂລກຈະໄດ້ເຊື່ອວ່າແມ່ນພຣະອົງແຫລະ, ຊົງໃຊ້ຂ້ານ້ອຍມາ. 22ແລະກຽດຕິຍົດ
ທີ່ພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍນັ້ນຂ້ານ້ອຍກໍໄດ້ໃຫ້ແກ່ເຂົາ ເພື່ອເຂົາຈະເປັນອັນໜຶ່ງອັນ
ດຽວກັນ ເໝືອນດັ່ງເຮົາທັງສອງເປັນອັນໜຶ່ງອັນດຽວກັນນັ້ນ. 23ຂ້ານ້ອຍຢູ່ໃນເຂົາແລະພຣະອົງ
ຊົງຢູ່ໃນຂ້ານ້ອຍ ເພື່ອເຂົາຈະເປັນອັນໜຶ່ງອັນດຽວກັນຢ່າງສົມບູນ ເພື່ອໂລກຈະໄດ້ຮູ້ວ່າແມ່ນ
ພຣະອົງນັ້ນແຫລະ, ຊົງໃຊ້ຂ້ານ້ອຍມາ ແລະພຣະອົງຊົງຮັກເຂົາເໝືອນດັ່ງທີ່ພຣະອົງຊົງຮັກຂ້າ-
ນ້ອຍ.

24“ໂອ ພຣະບິດາເອີຍ, ຊຶ່ງພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍນັ້ນ ຂ້ານ້ອຍກໍປາດຖະໜາ
ຢາກໃຫ້ເຂົາຢູ່ກັບຂ້ານ້ອຍໃນບ່ອນຊຶ່ງຂ້ານ້ອຍຢູ່ນັ້ນເໝືອນກັນ ເພື່ອເຂົາຈະໄດ້ເຫັນສະຫງ່າລາ-
ສີຂອງຂ້ານ້ອຍ ຊຶ່ງພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍ ເພາະພຣະອົງຊົງຮັກຂ້ານ້ອຍ ກ່ອນຊົງ

[ກ]ຫລື “ຈາກການຊົ່ວຮ້າຍ.”

ສ້າງໂລກ. [25]ໂອ ພຣະບິດາຜູ້ຍຸດຕິທຳ, ໂລກນີ້ບໍ່ໄດ້ຮູ້ຈັກ ພຣະອົງແຕ່ຝ່າຍຂ້ານ້ອຍໄດ້ຮູ້ຈັກ
ພຣະອົງ ແລະຄົນເຫລົ່ານີ້ໄດ້ຮູ້ວ່າແມ່ນພຣະອົງແຫລະ, ຊົງໃຊ້ຂ້ານ້ອຍມາ. [26]ຂ້ານ້ອຍໄດ້ເຮັດ
ໃຫ້ເຂົາຮູ້ຈັກພຣະນາມຂອງພຣະອົງ ແລະຈະເຮັດໃຫ້ເຂົາຮູ້ອີກ ເພື່ອຄວາມຮັກທີ່ພຣະອົງໄດ້ຊົງ
ຮັກຂ້ານ້ອຍຈະຢູ່ໃນເຂົາ ແລະຝ່າຍຂ້ານ້ອຍກໍຢູ່ໃນເຂົາ.”

# ບົດທີ 18

## ການມອບແລະການຈັບກຸມພຣະເຢຊູ

*(ມທ 26:47-56; ມຣກ 14:43-50; ລກ 22:47-53)*

[1]ເມື່ອ ພຣະເຢຊູ ຊົງກ່າວຖ້ອຍຄຳເຫລົ່ານີ້ແລ້ວ ພຣະອົງໄດ້ສະເດັດອອກໄປກັບພວກສາວົກ
ຂອງພຣະອົງ ຂ້າມຫ້ວຍ ກິດໂຣນ ບ່ອນມີສວນ ພຣະອົງສະເດັດເຂົ້າໄປໃນສວນນັ້ນກັບສາວົກ.
[2]ຝ່າຍ ຢູດາ ຜູ້ທີ່ທໍລະຍົດຕໍ່ພຣະອົງກໍຮູ້ຈັກບ່ອນນັ້ນເໝືອນກັນ ເພາະວ່າທີ່ນັ້ນ ພຣະເຢຊູ ໄດ້ປະ-
ຊຸມກັນກັບພວກສາວົກຫລາຍ ເທື່ອ ແລ້ວ. [3]ດັ່ງນັ້ນ ຢູດາ ໄດ້ພາພວກທະຫານກັບ ເຈົ້າໜ້າທີ່ ມາ
ຈາກພວກປະໂລຫິດຕົ້ນໃຫຍ່ແລະພວກ ຟາຣີຊາຍ ຖືໂຄມ, ຖືກະບອງ, ແລະເຄື່ອງ ອາວຸດເຂົ້າ
ມາໃນທີ່ນັ້ນ.

[4]ຝ່າຍ ພຣະເຢຊູ ຊາບທຸກສິ່ງທີ່ຈະ ເກີດຂຶ້ນກັບພຣະອົງ ຈຶ່ງສະເດັດອອກໄປຊົງຖາມເຂົາວ່າ,
“ທ່ານທັງຫລາຍຊອກຫາໃຜ.” [5]ເຂົາທູນຕອບພຣະອົງວ່າ, “ມາຫາ ເຢຊູ ໄທ ນາຊາເຣັດ” ພຣະ-
ເຢຊູ ຊົງກ່າວກັບ ເຂົາວ່າ, “ເຮົານີ້ແຫລະ, ຄືຜູ້ນັ້ນ” ຢູດາ ຜູ້ທໍລະຍົດຕໍ່ພຣະອົງກໍຢືນຢູ່ກັບຄົນ
ເຫລົ່ານັ້ນ. [6]ເມື່ອພຣະອົງຊົງກ່າວຕໍ່ເຂົາວ່າ, “ເຮົານີ້ແຫລະ, ຄືຜູ້ນັ້ນ” ເຂົາໄດ້ຖອຍຫລັງລົ້ມລົງ
ເທິງດິນ. [7]ພຣະອົງຈຶ່ງຊົງຖາມເຂົາອີກວ່າ, “ທ່ານທັງຫລາຍຊອກຫາໃຜ” ເຂົາທູນຕອບວ່າ, “ມາ
ຫາ ເຢຊູ ໄທ ນາຊາເຣັດ.” [8]ພຣະເຢຊູ ຊົງຕອບວ່າ, “ເຮົາໄດ້ບອກພວກທ່ານແລ້ວວ່າ ແມ່ນເຮົານີ້
ແຫລະ ເຫດສັນນັ້ນຖ້າພວກທ່ານຊອກຫາເຮົາ ຈົ່ງປະໃຫ້ຄົນເຫລົ່ານີ້ໄປເສຍ.” [9]ທັງນີ້ກໍເພື່ອໃຫ້
ສຳເລັດຕາມຖ້ອຍຄຳທີ່ພຣະອົງຊົງກ່າວວ່າ, “ຄົນເຫລົ່ານີ້ທີ່ພຣະອົງປະທານໃຫ້ແກ່ຂ້ານ້ອຍ ບໍ່
ໄດ້ສູນເສຍໄປແມ່ນແຕ່ຄົນດຽວ.”

[10]ຊີໂມນ ເປໂຕ ມີດາບຈຶ່ງຖອດອອກມາຟັນຂ້ອຍໃຊ້ຄົນໜຶ່ງຂອງມະຫາປະໂລຫິດ ຖືກຫູ
ເບື້ອງຂວາຂາດ ຂ້າໃຊ້ຄົນນັ້ນຊື່ວ່າ ມາລະໂຂ. [11]ພຣະເຢຊູ ຊົງກ່າວຕໍ່ ເປໂຕ ວ່າ, “ຈົ່ງເອົາດາບ
ໃສ່ຝັກໄວ້ເສຍ ຈອກທີ່ ພຣະບິດາ ຊົງປະທານໃຫ້ແກ່ເຮົາ ເຮົາຈະບໍ່ດື່ມຫລື.”

## ພຣະເຢຊູຊົງຖືກນຳໄປຫາປະໂລຫິດ

*(ມທ 26:57-58; ມຣກ 14:53-54; ລກ 22:54)*

[12]ກອງທະຫານກັບນາຍພັນ ພ້ອມດ້ວຍເຈົ້າໜ້າທີ່ຂອງພວກ ຢິວ ໄດ້ຫຸ້ມຈັບ ພຣະເຢຊູ ມັດໄວ້.
[13]ແລ້ວ ເຂົາ ໄດ້ພາພຣະອົງ ໄປຫາ ອັນນາ ກ່ອນ ເພາະ ອັນນາ ເປັນພໍ່ເມຍຂອງ ກາຢະຟາ ຜູ້ຊຶ່ງ
ເປັນ ມະຫາປະໂລຫິດປະຈຳການ ໃນປີນັ້ນ. [14]ກາຢະຟາ ຜູ້ນີ້ ແຫລະ, ທີ່ ແນະນຳພວກ ຢິວ ວ່າ
ຄວນໃຫ້ຄົນໜຶ່ງຕາຍແທນພົນລະເມືອງທັງໝົດ.

## ເປໂຕປະຕິເສດພຣະເຢຊູ

*(ມທ 26:69-70; ມຣກ 14:66-68; ລກ 22:55-57)*

[15]ຊີໂມນ ເປໂຕ ກັບສາວົກອີກຄົນໜຶ່ງໄດ້ຕາມ ພຣະເຢຊູ ໄປ ສາວົກຄົນນັ້ນຮູ້ຈັກກັນກັບມະຫາ
ປະໂລຫິດ ເຂົາໄດ້ເຂົ້າໄປກັບ ພຣະເຢຊູ ເຖິງເດີ່ນບ້ານຂອງມະຫາປະໂລຫິດ. [16]ຝ່າຍ ເປໂຕ ຢືນ
ຢູ່ຮີມປະຕູຂ້າງນອກ ສາວົກຄົນນັ້ນທີ່ຮູ້ຈັກກັນກັບມະຫາປະໂລຫິດ ໄດ້ອອກໄປເວົ້າກັບຜູ້ຍິງທີ່
ເຝົ້າປະຕູ ແລ້ວກໍພາ ເປໂຕ ເຂົ້າໄປ. [17]ມີຍິງໃຊ້ທີ່ເຝົ້າປະຕູໄດ້ຖາມ ເປໂຕ ວ່າ, "ໂຕກໍເປັນສາວົກ
ຂອງຄົນນັ້ນເໝືອນກັນຕີ້" ເປໂຕ ຕອບວ່າ, "ບໍ່ແມ່ນດອກ." [18]ພວກຂ້ອຍໃຊ້ກັບພວກຍາມກໍຢືນ
ຢູ່ທີ່ນັ້ນ ເອົາຖ່ານມາດັ່ງໄຟເພາະວ່າ ອາກາດໜາວ ຈຶ່ງພາກັນຢືນຜີງໄຟຢູ່ ແລະ ເປໂຕ ກໍຢືນຜີງ
ໄຟນຳເຂົາເໝືອນກັນ.

## ມະຫາປະໂລຫິດສອບຖາມພຣະເຢຊູ

*(ມທ 26:59-66; ມຣກ 14:55-64; ລກ 22:66-71)*

[19]ຝ່າຍມະຫາປະໂລຫິດຈຶ່ງທູນຖາມ ພຣະເຢຊູ ເຖິງພວກສາວົກຂອງພຣະອົງ ແລະ ເຖິງຄຳສັ່ງ-
ສອນຂອງພຣະອົງ. [20]ພຣະເຢຊູ ຊົງຕອບທ່ານວ່າ, "ເຮົານີ້ໄດ້ກ່າວໃຫ້ໂລກຟັງຢ່າງເປີດເຜີຍ
ເຮົາໄດ້ສັ່ງສອນສະເໝີໃນໂຮງທຳມະເທດສະໜາ ແລະ ໃນບໍລິເວນພຣະວິຫານທີ່ພວກ ຢິວ ທັງ
ໝົດຊຸມນຸມກັນ ເຮົາບໍ່ໄດ້ກ່າວສິ່ງໃດໃນທີ່ລັບລີ້. [21]ທ່ານຖາມເຮົາເຮັດຫຍັງ ຈົ່ງຖາມຄົນທັງ-
ຫລາຍທີ່ໄດ້ຟັງເຮົາວ່າ ເຮົາໄດ້ເວົ້າອັນໃດກັບເຂົາ ຄົນເຫລົ່ານີ້ແຫລະ, ໄດ້ຮູ້ອັນທີ່ເຮົາໄດ້ເວົ້າ
ນັ້ນ." [22]ເມື່ອພຣະອົງຊົງກ່າວດັ່ງນັ້ນແລ້ວ ເຈົ້າໜ້າທີ່ຄົນໜຶ່ງທີ່ຢືນຢູ່ທີ່ນັ້ນໄດ້ຕົບພຣະພັກ ພຣະ-
ເຢຊູ ແລ້ວກ່າວວ່າ, "ເຈົ້າຕອບມະຫາປະໂລຫິດຢ່າງນັ້ນຫລື." [23]ພຣະເຢຊູ ຊົງຕອບວ່າ, "ຖ້າເຮົາ
ເວົ້າຜິດ ຈົ່ງເປັນພະຍານໃນການຜິດນັ້ນ ແຕ່ຖ້າເຮົາເວົ້າຖືກ ທ່ານຕົບເຮົາເຮັດຫຍັງ". [24]ອັນນາ
ຈຶ່ງໃຫ້ພາ ພຣະເຢຊູ ທີ່ຊົງຖືກມັດຢູ່ນັ້ນໄປຫາ ກາຢະຟາ ຜູ້ເປັນມະຫາປະໂລຫິດປະຈຳການ.

## ເປໂຕປະຕິເສດພຣະເຢຊູອີກ

*(ມທ 26:71-75; ມຣກ 14:69-72; ລກ 22:58-62)*

[25]ຂະນະນັ້ນຊີໂມນ ເປໂຕ ກຳລັງຢືນຜີງໄຟຢູ່ ຄົນເຫລົ່ານັ້ນຖາມ ເປໂຕ ວ່າ, "ໂຕກໍເປັນສາວົກ
ຂອງຄົນນັ້ນເໝືອນກັນບໍ່ແມ່ນຫລື" ເປໂຕ ຕອບປະຕິເສດວ່າ, "ບໍ່ແມ່ນດອກ." [26]ຂ້ອຍໃຊ້ຄົນ
ໜຶ່ງຂອງມະຫາປະໂລຫິດ ຊຶ່ງເປັນພີ່ນ້ອງກັບ ເປໂຕ ຟັນຫູຂາດນັ້ນ ກໍໄດ້ຖາມວ່າ, "ຂ້ອຍໄດ້
ເຫັນເຈົ້າກັບຄົນນັ້ນໃນສວນບໍ່ແມ່ນຫລື." [27]ເປໂຕ ຈຶ່ງຕອບປະຕິເສດອີກ ແລະທັນໃດນັ້ນໄກ່ກໍ
ຂັນ

## ພຣະເຢຊູຊົງຖືກນຳໄປຫາປີລາດ

*(ມທ 27:1-2; 11-14; ມຣກ 15:1-5; ລກ 23:1-5)*

[28]ເຂົາກໍໄດ້ນຳ ພຣະເຢຊູ ອອກຈາກເຮືອນຂອງ ກາຢະຟາ ໄປຍັງສານ ໄປຣໂຕຣຽມ ເປັນເວລາ
ແຕ່ເຊົ້າ ສ່ວນພວກຢິວບໍ່ໄດ້ເຂົ້າໄປໃນສານນັ້ນ ເພາະຢ້ານວ່າຈະບໍ່ສະອາດເພື່ອຈະກິນປັດສະ-
ຄາ ໄດ້. [29]ດັ່ງນັ້ນ ປີລາດ ຈຶ່ງອອກມາຫາ ເຂົາແລະຖາມວ່າ, "ພວກທ່ານມີເລື່ອງອັນໃດມາຟ້ອງ
ຄົນນີ້." [30]ເຂົາຕອບວ່າ, "ຖ້າຄົນນີ້ບໍ່ເປັນຜູ້ຮ້າຍພວກຂ້ານ້ອຍກໍຄົງຈະບໍ່ໄດ້ມອບໃຫ້ທ່ານ."

31ປີລາດ ຈຶ່ງກ່າວແກ່ເຂົາວ່າ, "ພວກທ່ານຈົ່ງເອົາຄົນນີ້ໄປຊໍາລະຕັດສິນຕາມກົດໝາຍຂອງ
ພວກທ່ານເສຍ" ພວກຢິວຈຶ່ງຮຽນວ່າ, "ຕາມກົດໝາຍພວກຂ້ານ້ອຍບໍ່ມີສິດຈະປະຫານຊີວິດຜູ້
ໃດຜູ້ໜຶ່ງ." 32ທັງນີ້ເພື່ອໃຫ້ສໍາເລັດຕາມຖ້ອຍຄໍາຂອງ ພຣະເຢຊູ ຊຶ່ງຊົງກ່າວໄວ້ເພື່ອສະແດງວ່າ
ພຣະອົງຊົງສິ້ນພຣະຊົນດ້ວຍວິທີໃດ.

33ປີລາດ ຈຶ່ງເຂົ້າໄປໃນສານ ໄປຣໂຕຣຽມ ອີກ ແລະເອີ້ນ ພຣະເຢຊູ ມາ ແລ້ວທູນຖາມວ່າ,
"ເຈົ້າເປັນກະສັດຂອງຊາດຢິວຫລື." 34ພຣະເຢຊູຊົງຕອບວ່າ, "ທ່ານຖາມຢ່າງນັ້ນແຕ່ລໍາພັງແຕ່
ໂຕທ່ານເອງຫລື ຫລືວ່າຄົນອື່ນບອກທ່ານເຖິງເລື່ອງເຮົາ." 35ປີລາດທູນຕອບວ່າ, "ສ່ວນຂ້ອຍບໍ່
ແມ່ນຊາດຢິວ ຊົນຊາດຂອງເຈົ້າເອງແລະພວກປະໂລຫິດຕົນໃຫຍ່ໄດ້ມອບເຈົ້າໄວ້ໃຫ້ຂ້ອຍ ເຈົ້າ
ໄດ້ເຮັດອັນໃດ."

36ພຣະເຢຊູ ຊົງຕອບວ່າ, "ລາຊະອໍານາດຂອງເຮົາບໍ່ເປັນແຕ່ໂລກນີ້ ຖ້າລາຊະອໍານາດຂອງ
ເຮົາເປັນແຕ່ໂລກນີ້ ຜູ້ຮັບໃຊ້ຂອງເຮົາຄົງຈະໄດ້ຕໍ່ສູ້ ບໍ່ໃຫ້ເຮົາຖືກມອບໄວ້ແກ່ພວກຢິວ ແຕ່ບັດ
ນີ້ລາຊະອໍານາດຂອງເຮົາບໍ່ເປັນແຕ່ໂລກນີ້." 37ປີລາດ ຈຶ່ງທູນພຣະອົງວ່າ, "ຖ້າດັ່ງນັ້ນເຈົ້າເປັນ
ກະສັດຕີ້" ພຣະເຢຊູຊົງຕອບວ່າ, "ທ່ານເວົ້າແລ້ວວ່າເຮົາເປັນກະສັດຝ່າຍເຮົາເກີດມາ ແລະເຂົ້າ
ມາໃນໂລກນີ້ກໍເພາະເຫດນີ້ແຫລະ ຄືເພື່ອຈະເປັນພະຍານເຖິງຄວາມຈິງ ທຸກໆ ຄົນທີ່ຢູ່ຝ່າຍ
ຄວາມຈິງຍ່ອມຟັງສຽງຂອງເຮົາ." 38ປີລາດທູນຖາມວ່າ, "ຄວາມຈິງນັ້ນຄືອັນໃດ."

## ພຣະເຢຊູຊົງຖືກພິພາກສາໃຫ້ສິ້ນພຣະຊົນ

*(ມທ 27:15-31; ມຣກ 15:6-20; ລກ 23:13-25)*

ເມື່ອປີລາດຖາມດັ່ງນີ້ແລ້ວທ່ານກໍອອກໄປຫາພວກຢິວອີກ ແລະບອກເຂົາວ່າ, "ຝ່າຍເຮົາບໍ່
ເຫັນຜິດໃນໃນຜູ້ນີ້ຈັກປະການ. 39ແຕ່ພວກທ່ານມີທໍານຽມໃຫ້ເຮົາປ່ອຍຄົນໜຶ່ງໃຫ້ພວກທ່ານໃນ
ເທດສະການປັດສະຄາ ພວກທ່ານຢາກໃຫ້ເຮົາປ່ອຍກະສັດຂອງຊາດຢິວໃຫ້ແກ່ພວກທ່ານ
ຫລື." 40ຄົນທັງຫລາຍຈຶ່ງຮ້ອງຂຶ້ນອີກວ່າ, "ຢ່າປ່ອຍຄົນນີ້ແຕ່ຈົ່ງປ່ອຍບາຣາບາ" ສ່ວນບາຣາ-
ບານັ້ນເປັນໂຈນ.

# ບົດທີ 19

1ແລ້ວປີລາດຈຶ່ງເອົາພຣະເຢຊູໄປໃຫ້ເຂົາຂ້ຽນ. 2ແລະພວກທະຫານໄດ້ເອົາເຄືອໜາມມາຖັກ
ເປັນໂຄ້ງແທນພວງມາໄລສຸບໃສ່ພຣະສຽນຂອງພຣະອົງ ພ້ອມທັງເອົາເສື້ອຄຸມສີມ່ວງອ່ອນມານຸ່ງ
ໃຫ້ພຣະອົງ. 3ແລະເຂົາໄດ້ຫຍັບເຂົ້າມາຫາພຣະອົງທູນວ່າ, "ກະສັດຂອງຊາດຢິວເອີຍ, ຈົ່ງຊົງ
ພຣະຈະເລີນເທີນ" ແລະເຂົາກໍຕົບພຣະພັກພຣະອົງ.

4ປີລາດໄດ້ອອກໄປອີກແລະກ່າວຕໍ່ເຂົາວ່າ, "ເບິ່ງແມ, ເຮົາພາຄົນນີ້ອອກມາຫາທ່ານທັງ-
ຫລາຍ ເພື່ອໃຫ້ພວກທ່ານຮູ້ວ່າເຮົາບໍ່ເຫັນຄວາມຜິດໃນຜູ້ນີ້ຈັກປະການ." 5ພຣະເຢຊູຈຶ່ງສະເດັດ
ອອກມາຊົງພວງມາໄລທີ່ເຮັດດ້ວຍເຄືອໜາມນັ້ນ ແລະຊົງເສື້ອຄຸມສີມ່ວງອ່ອນ ປີລາດຈຶ່ງກ່າວ
ແກ່ເຂົາວ່າ, "ເບິ່ງຄົນນີ້ແມ." 6ເມື່ອພວກປະໂລຫິດຕົນໃຫຍ່ແລະພວກເຈົ້າໜ້າທີ່ໄດ້ເຫັນພຣະອົງ
ເຂົາກໍຮ້ອງຂຶ້ນວ່າ, "ຄຶງໄວ້ທີ່ໄມ້ກາງແຂນ ຄຶງໄວ້ທີ່ໄມ້ກາງແຂນ" ປີລາດຈຶ່ງກ່າວຕໍ່ເຂົາວ່າ,

"ພວກເຈົ້າຈົ່ງເອົາໄປຄຶງໄວ້ ເພາະຝ່າຍເຮົາບໍ່ເຫັນຄວາມຜິດໃນຜູ້ນີ້." 7ພວກຢິວໄດ້ຕອບວ່າ
"ພວກເຮົາມີກົດໝາຍ ແລະຕາມກົດໝາຍນັ້ນຄົນນີ້ຄວນຕາຍເພາະມັນຕັ້ງຕົວເປັນພຣະບຸດຂອງ
ພຣະເຈົ້າ."

8ເມື່ອປີລາດໄດ້ຍິນດັ່ງນັ້ນແລ້ວທ່ານກໍຕົກໃຈຫລາຍຂຶ້ນ. 9ທ່ານຈຶ່ງເຂົ້າໄປໃນສານໄປຣໂຕ-
ຣຽມອີກ ແລ້ວທູນຖາມພຣະເຢຊູວ່າ, "ເຈົ້າມາແຕ່ໃສ" ແຕ່ພຣະເຢຊູບໍ່ໄດ້ຕອບປະການໃດ.
10ປີລາດຈຶ່ງທູນພຣະອົງວ່າ," "ເຈົ້າບໍ່ເວົ້າກັບເຮົາຫລື ເຈົ້າບໍ່ຮູ້ຫລືວ່າເຮົາມີສິດອຳນາດຈະປ່ອຍ
ເຈົ້າ ແລະມີສິດອຳນາດຄຶງເຈົ້າໄວ້ທີ່ໄມ້ກາງແຂນ." 11ພຣະເຢຊູຊົງຕອບທ່ານວ່າ, "ທ່ານຈະບໍ່ມີ
ສິດອຳນາດເໜືອເຮົາຈັກປະການ ເວັ້ນແຕ່ອຳນາດນັ້ນຈະຊົງປະທານແຕ່ທັງເທິງໃຫ້ແກ່ທ່ານ
ເຫດສັນນັ້ນຜູ້ທີ່ມອບເຮົາໄວ້ກັບທ່ານກໍມີຄວາມຜິດບາບຫລາຍກວ່າທ່ານ."

12ເນື່ອງຈາກຂໍ້ນີ້ປີລາດຈຶ່ງຊອກຫາໂອກາດທີ່ຈະປ່ອຍພຣະອົງເສຍ ແຕ່ພວກຢິວຮ້ອງສຽງ
ດັງຂຶ້ນວ່າ, "ຖ້າທ່ານປ່ອຍຄົນນີ້ທ່ານກໍບໍ່ເປັນມິດຂອງ ກາຍຊາ ທຸກຄົນທີ່ຕັ້ງຕົວເປັນກະສັດກໍ
ປະກົດຕົວຕໍ່ສູ້ ກາຍຊາ." 13ເມື່ອປີລາດໄດ້ຍິນດັ່ງນັ້ນທ່ານຈຶ່ງພາພຣະເຢຊູອອກມາ ແລ້ວນັ່ງ
ບັນລັງພິພາກສາໃນບ່ອນທີ່ເອີ້ນວ່າເດີ່ນປູຫີນ ພາສາເຮັບເຣີເອີ້ນວ່າ ຄັບບາທາ. 14ວັນນັ້ນເປັນ
ວັນຈັດແຈງປັດສະຄາ ເວລາປະມານທ່ຽງວັນ ທ່ານໄດ້ກ່າວກັບພວກຢິວວ່າ "ນີ້ຄືກະສັດຂອງ
ພວກທ່ານ."

15ຝ່າຍເຂົາໄດ້ຮ້ອງສຽງດັງຂຶ້ນວ່າ, "ເອົາມັນໄປເສຍ, ເອົາມັນໄປເສຍ ຄຶງມັນໄວ້ທີ່ໄມ້ກາງ
ແຂນເສຍ" ປີລາດຈຶ່ງຖາມເຂົາວ່າ. "ພວກທ່ານຈະໃຫ້ເຮົາຄຶງກະສັດຂອງພວກທ່ານທີ່ໄມ້ກາງ
ແຂນຫລື" ພວກປະໂລຫິດຕົ້ນໃຫຍ່ຕອບວ່າ, "ເວັ້ນແຕ່ ກາຍຊາ ແລ້ວພວກເຮົາບໍ່ມີກະສັດ."
16ແລ້ວປີລາດຈຶ່ງມອບພຣະອົງໃຫ້ເຂົາ ເພື່ອເອົາໄປຄຶງໄວ້ທີ່ໄມ້ກາງແຂນ.

## ການຄຶງທີ່ໄມ້ກາງແຂນ

*(ມທ 27:32-44; ມຣກ 15:21-32; ລກ 23:26-43)*

17ເຂົາຈຶ່ງຄຸມເອົາພຣະເຢຊູອອກໄປ. ແລະພຣະອົງຊົງແບກເອົາໄມ້ກາງແຂນຂອງພຣະອົງ
ສະເດັດໄປເຖິງບ່ອນທີ່ເອີ້ນວ່າກະໂຫລກຫົວ (ພາສາເຮັບເຣີເອີ້ນວ່າໂຄລະໂຄທາ). 18ທີ່ນັ້ນເຂົາ
ໄດ້ຄຶງພຣະອົງໄວ້ທີ່ໄມ້ກາງແຂນກັບອີກສອງຄົນ ຄົນລະຂ້າງແລະພຣະເຢຊູຊົງຢູ່ກາງ. 19ປີ-
ລາດໃຫ້ຂຽນປ້າຍຕິດໄວ້ທີ່ໄມ້ກາງແຂນອ່ານວ່າ, "ເຢຊູໄທນາຊາເຣັດ ກະສັດຂອງຊາດຢິວ."
20ຄົນຢິວຫລາຍຄົນໄດ້ອ່ານປ້າຍນັ້ນ ເພາະບ່ອນທີ່ເຂົາຄຶງພຣະເຢຊູນັ້ນຢູ່ໃກ້ກຸງ ແລະປ້າຍນັ້ນ
ເຂົາໄດ້ຂຽນເປັນພາສາເຮັບເຣີ, ພາສາໂຣມ, ແລະພາສາກຣີກ. 21ແລ້ວພວກປະໂລຫິດຕົ້ນ
ໃຫຍ່ຂອງຊາດຢິວ ຈຶ່ງຮຽນປີລາດວ່າ, "ຂໍຢ່າຂຽນວ່າ 'ກະສັດຂອງຊາດຢິວ' ແຕ່ຂຽນວ່າ 'ຄົນ
ນີ້ບອກວ່າ ເຮົາເປັນກະສັດຂອງຊາດຢິວ'." 22ປີລາດຕອບວ່າ, "ສິ່ງທີ່ເຮົາຂຽນແລ້ວກໍແລ້ວໄປ."

23ເມື່ອພວກທະຫານໄດ້ຄຶງພຣະເຢຊູໄວ້ແລ້ວ ເຂົາໄດ້ເອົາເຄື່ອງຊົງຂອງພຣະອົງມາແບ່ງ
ເປັນສີ່ພູດ ແລ້ວກໍປັນກັນຜູ້ລະພູດ ແລະຍັງເອົາສະຫລອງຊັ້ນໃນພຣະອົງຊຶ່ງບໍ່ມີດູກ ແຕ່ແລ້ວ
ດ້ວຍຜ້າທີ່ຕໍ່າທັງຜືນ. 24ເຂົາຈຶ່ງເວົ້າກັນວ່າ, "ພວກເຮົາຢ່າຈີກປັນກັນເທາະ ແຕ່ໃຫ້ຈົກສະຫລາກ
ເອົາ ເພື່ອຈະໄດ້ຮູ້ວ່າເປັນຂອງຜູ້ໃດ" ທັງນີ້ເພື່ອໃຫ້ສຳເລັດຕາມພຣະຄຳພີທີ່ຂຽນ ໄວ້ວ່າ, "ເສື້ອ

ຜ້າຂອງຂ້າພຣະອົງເຂົາໄດ້ແບ່ງປັນກັນສ່ວນເສື້ອຂອງພຣະອົງນັ້ນເຂົາກໍຈົກສະຫລາກກັນ.”
25ພວກທະຫານໄດ້ເຮັດດັ່ງນັ້ນ ຝ່າຍມານດາແລະນ້າສາວຂອງພຣະອົງ ກັບນາງ ມາຣີອາ
ເມຍ ຂອງ ກະໂລປາ ແລະ ນາງ ມາຣີອາ ໄທ ມັກດາລາ ກໍ ຢືນ ຢູ່ ໃກ້ ໄມ້ກາງ ແຂນ ຂອງ ພຣະເຢຊູ.
26ເມື່ອ ພຣະເຢຊູ ຊົງ ເຫັນມານດາຂອງພຣະອົງ ແລະສາວົກທີ່ພຣະອົງຊົງຮັກຢືນຢູ່ໃກ້ ພຣະອົງຈຶ່ງ
ຊົງກ່າວກັບມານດາວ່າ, “ນາງເອີຍ, ນີ້ແຫລະ, ລູກຊາຍຂອງນາງ.” 27ແລ້ວພຣະອົງຊົງກ່າວ
ກັບສາວົກຜູ້ນັ້ນວ່າ, “ນີ້ແຫລະ, ມານດາຂອງທ່ານ” ຕັ້ງແຕ່ເວລານັ້ນມາ ສາວົກຄົນນັ້ນກໍຮັບ
ເອົານາງມາຢູ່ໃນເຮືອນຂອງຕົນ.

## ພຣະເຢຊູຊົງສິ້ນພຣະຊົນ

*(ມທ 27:45-56; ມຣກ 15:33-41; ລກ 23:44-49)*

28ຫລັງ ຈາກ ນັ້ນ ພຣະເຢຊູ ຊົງ ຊາບ ວ່າ ທຸກສິ່ງ ສຳເລັດ ແລ້ວ ເພື່ອ ໃຫ້ສຳເລັດ ຕາມ ພຣະຄຳພີ
ພຣະອົງຈຶ່ງຊົງກ່າວວ່າ, “ເຮົາຢາກນ້ຳ.” 29ທີ່ນັ້ນມີອ່າງເຕັມເຫລົ້າແວງສົ້ມ ພວກທະຫານຈຶ່ງເອົາ
ຟອງນ້ຳຈຸ່ມເອົາ ເຫລົ້າ ແວງສົ້ມ ສຽບ ໃສ່ປາຍ ໄມ້ຫູສົບ ຍື່ນ ໃສ່ພຣະ ໂອດ ຂອງພຣະອົງ. 30ເມື່ອ
ພຣະເຢຊູ ຊົງຮັບ ເຫລົ້າ ແວງສົ້ມແລ້ວພຣະອົງກໍຊົງກ່າວວ່າ, “ສຳເລັດ ແລ້ວ” ແລະ ເມື່ອຊົງກົ້ມ
ພຣະສຽນລົງ ພຣະອົງຊົງມອບຈິດວິນຍານໄວ້.

## ເຂົາແທງທີ່ຂ້າງພຣະເຢຊູ

31ສັນນັ້ນພວກຢິວ ຈຶ່ງຂໍນຳປີລາດໃຫ້ຫັກກະດູກຂາຂອງຜູ້ທີ່ຖືກຄຶງໄວ້ນັ້ນ ແລະໃຫ້ເອົາສົບໄປ
ເສຍ ທັງນີ້ກໍເພາະ ເປັນວັນຈັດ ແຈງ ແລະ ເຂົາບໍ່ຢາກ ໃຫ້ສົບນັ້ນຄ້າງຢູ່ທີ່ ໄມ້ກາງ ແຂນ ໃນວັນ ຊະ-
ບາໂຕ (ເພາະວັນຊະບາໂຕ ນັ້ນເປັນວັນໃຫຍ່). 32ດັ່ງນັ້ນພວກທະຫານຈຶ່ງທຸບຂາຜູ້ທີໜຶ່ງ ແລະຜູ້
ທີສອງຊຶ່ງຖືກຄຶງ ໄວ້ພ້ອມ. 33ແຕ່ ເມື່ອ ເຂົາມາ ເຖິງ ພຣະເຢຊູ ແລະ ເຫັນວ່າພຣະອົງສິ້ນພຣະຊົນ
ແລ້ວ ເຂົາຈຶ່ງບໍ່ໄດ້ຫັກຂາຂອງພຣະອົງ. 34ສ່ວນທະຫານຄົນໜຶ່ງ ໄດ້ເອົາຫອກແທງທີ່ຂ້າງຂອງ
ພຣະອົງ ແລະ ໂລຫິດກັບນ້ຳກໍໄຫລອອກທັນທີ. 35ຜູ້ທີ່ໄດ້ເຫັນກໍເປັນພະຍານ ຄຳພະຍານຂອງຜູ້
ນັ້ນກໍເປັນຈິງ (ແລະພຣະອົງນັ້ນຊົງຊາບວ່າ ຜູ້ນັ້ນເວົ້າຄວາມຈິງ) ເພື່ອທ່ານທັງຫລາຍຈະໄດ້
ເຊື່ອ ເໝືອນກັນ. 36ເພາະສິ່ງ ເຫລົ່ານີ້ ເກີດຂຶ້ນ ເພື່ອ ໃຫ້ສຳເລັດ ຕາມຂໍ້ພຣະຄຳພີທີ່ວ່າ “ກະດູກ
ຂອງທ່ານຈະບໍ່ຖືກຫັກເສຍຈັກເຫລັ້ມ.” 37ແລະມີຂໍ້ພຣະຄຳພີອີກຂໍ້ໜຶ່ງທີ່ວ່າ, “ເຂົາຈະມອງເບິ່ງ
ທ່ານຜູ້ທີ່ເຂົາໄດ້ແທງ.”

## ການວາງພຣະສົບໃສ່ອຸບໂມງ

*(ມທ 27:57-61; ມຣກ 15:42-47; ລກ 23:50-56)*

38ຫລັງ ຈາກ ນີ້ ໂຢເຊັບ ໄທບ້ານ ອາຣີມາທາຍ ຊຶ່ງ ເປັນ ລູກສິດ ລັບໆ ຂອງ ພຣະເຢຊູ ເພາະ
ທ່ານຢ້ານພວກຢິວ ກໍໄດ້ຂໍພຣະສົບ ພຣະເຢຊູ ຈາກ ປີລາດ ແລະປີລາດກໍຍອມໃຫ້ ໂຢເຊັບ ຈຶ່ງ
ມາອັນເຊີນພຣະສົບຂອງພຣະອົງໄປ. 39ຝ່າຍ ນີໂກເດມ ຜູ້ໄດ້ມາຫາ ພຣະເຢຊູ ເວລາກາງຄືນ ແຕ່
ຫົວທີນັ້ນກໍມາເໝືອນກັນ ທ່ານໄດ້ເອົາເຄື່ອງຫອມປະສົມນຳມາ ຄືຢາງໄມ້ກັບຫາງແຂ້ ໜັກປະ-
ມານສາມສິບກິໂລ. 40ເມື່ອອັນເຊີນພຣະສົບຂອງ ພຣະເຢຊູ ລົງມາ ເຂົາເອົາຜ້າປ່ານກັບເຄື່ອງ
ຫອມພັນພຣະສົບນັ້ນຕາມທຳນຽມມັ້ງນສົບຂອງຊາດຢິວ. 41ອັນໜຶ່ງໃນບ່ອນພຣະອົງຊົງຖືກຄຶງ

ໄວ້ນັ້ນມີສວນໜຶ່ງ ໃນສວນນັ້ນມີອຸບໂມງໃໝ່ທີ່ຍັງບໍ່ໄດ້ວາງສົບຜູ້ໃດຈັກເທື່ອ. [42]ດັ່ງນັ້ນເນື່ອງ
ຈາກວ່າວັນນັ້ນເປັນວັນຈັດແຈງຂອງຊາດຢິວ ແລະເນື່ອງຈາກ ວ່າອຸບໂມງນັ້ນຢູ່ໃກ້ ເຂົາຈຶ່ງ
ບັນຈຸພຣະສົບຂອງ ພຣະເຢຊູ ໄວ້ທີ່ນັ້ນ.

# ບົດທີ 20

## ການຄືນພຣະຊົນ

*(ມທ 28:1-10; ມຣກ 16:1-8; ລກ 24:1-12)*

[1]ວັນຕົ້ນສັບປະດານັ້ນເວລາເຊົ້າຍັງມືດຢູ່ ມາຣີອາ ໄທ ມັກດາລາ ໄດ້ມາເຖິງອຸບໂມງ ແລະ
ນາງໄດ້ເຫັນກ້ອນຫີນຖືກຍ້າຍອອກຈາກ ປາກອຸບໂມງແລ້ວ. [2]ນາງຈຶ່ງແລ່ນໄປຫາຊີໂມນ ເປໂຕ
ແລະສາວົກຜູ້ອື່ນທີ່ ພຣະເຢຊູ ຊົງຮັກແພງນັ້ນ ແລ້ວເວົ້າກັບເຂົາວ່າ, “ເຂົາໄດ້ເອົາສົບຂອງພຣະ-
ອາຈານອອກຈາກອຸບໂມງແລ້ວ ແລະພວກເຮົາບໍ່ຮູ້ຈັກວ່າເຂົາເອົາໄປໄວ້ທີ່ໃດ.” [3]ເປໂຕກັບສາ-
ວົກຄົນອື່ນນັ້ນຈຶ່ງພາກັນອອກມາເຖິງອຸບໂມງ. [4]ເຂົາທັງສອງພ້ອມກັນແລ່ນມາ ແຕ່ສາວົກອື່ນ
ນັ້ນໄດ້ແລ່ນໄວກວ່າ ເປໂຕ ຈຶ່ງມາເຖິງອຸບໂມງກ່ອນ. [5]ເມື່ອກົ້ມລົງເພິ່ນໄດ້ເຫັນຜ້າປ່ານກອງຢູ່ແຕ່
ບໍ່ໄດ້ເຂົ້າໄປທາງໃນ. [6]ສ່ວນຊີໂມນ ເປໂຕ ທີ່ຕາມຫລັງມານັ້ນ ກໍຮອດເໝືອນກັນ ແລ້ວໄດ້ເຂົ້າໄປ
ໃນອຸໂມງແລະໄດ້ເຫັນຜ້າປ່ານກອງຢູ່. [7]ແລະຜ້າປົກພຣະສຽນຂອງພຣະອົງບໍ່ໄດ້ກອງຢູ່ກັບຜ້າ
ອື່ນ ແຕ່ພັບໄວ້ຕ່າງຫາກ. [8]ແລ້ວສາວົກຜູ້ອື່ນທີ່ມາເຖິງກ່ອນນັ້ນກໍໄດ້ເຂົາໄປເໝືອນກັນ ກໍໄດ້
ເຫັນແລະເຊື່ອ. [9]ເພາະວ່າຂະນະນັ້ນເຂົາຍັງບໍ່ໄດ້ເຂົ້າໃຈຂໍ້ພຣະຄຳພີທີ່ຊຽນໄວ້ວ່າ ພຣະອົງຈະ
ຕ້ອງຄືນມາຈາກຄວາມຕາຍ.

[10]ແລ້ວສາວົກທັງສອງນັ້ນກໍກັບໄປຍັງບ້ານຂອງຕົນ.

## ພຣະເຢຊູຊົງປະກົດແກ່ມາຣີອາມັກດາລາ

*(ມທ 28:9-10; ມຣກ 16:9-10)*

[11]ຝ່າຍ ມາຣີອາ ຢືນຮ້ອງໄຫ້ຢູ່ນອກອຸບໂມງ ຂະນະທີ່ຍັງຮ້ອງໄຫ້ຢູ່ນາງໄດ້ກົ້ມຫລຽວໄປທາງ
ອຸບໂມງ. [12]ແລະນາງໄດ້ເຫັນ ເທວະດາສອງຕົນນັ່ງຢູ່ບ່ອນທີ່ເຂົາວາງພຣະສົບຂອງ ພຣະເຢຊູ
ຕົນໜຶ່ງຢູ່ເບື້ອງພຣະສຽນ ຕົນໜຶ່ງຢູ່ເບື້ອງພຣະບາດ. [13]ເທວະດາທັງສອງນັ້ນໄດ້ຖາມນາງວ່າ,
“ນາງເອີຍ, ເຈົ້າຮ້ອງໄຫ້ເຮັດຫຍັງ” ນາງຈຶ່ງຕອບວ່າ, “ເພາະເຂົາໄດ້ເອົາພຣະສົບຂອງພຣະອາ-
ຈານຂອງຂ້ານ້ອຍໄປແລ້ວ ແລະຂ້ານ້ອຍບໍ່ຮູ້ວ່າເຂົາເອົາໄປວາງໄວ້ບ່ອນໃດ.” [14]ເມື່ອເວົ້າດັ່ງ-
ນັ້ນແລ້ວນາງໄດ້ຫລຽວຫລັງມາເຫັນ ພຣະເຢຊູ ຢືນຢູ່ ແຕ່ບໍ່ຮູ້ວ່າແມ່ນ ພຣະເຢຊູ.

[15]ພຣະເຢຊູ ຊົງຖາມນາງວ່າ, “ນາງເອີຍ, ເຈົ້າຮ້ອງໄຫ້ເຮັດຫຍັງ ເຈົ້າຊອກຫາຜູ້ໃດ” ນາງ
ຄຶດວ່າແມ່ນຄົນເຝົ້າສວນ ຈຶ່ງຕອບວ່າ, “ນາຍເອີຍ, ຖ້າແມ່ນທ່ານໄດ້ເອົາສົບເພິ່ນໄປ ຂໍບອກ
ຂ້ານ້ອຍວ່າທ່ານໄດ້ເອົາໄປວາງໄວ້ທີ່ໃດແລະຂ້ານ້ອຍຈະໄປຍົກເອົາເສຍ” [16]ພຣະເຢຊູ ຊົງກ່າວ
ກັບນາງວ່າ, “ມາຣີອາ ເອີຍ” ມາຣີອາ ກໍຕ່າວໜ້າມາທູນພຣະອົງ ເປັນພາສາ ເຮັບເຣີ ວ່າ, “ຣັບ-
ໂບນີ” (ທີ່ແປວ່າ “ພຣະອາຈານເອີຍ). [17]ພຣະເຢຊູ ຊົງກ່າວກັບ ມາຣີອາ ວ່າ, “ຢ່າຊູ່ໜ່ວງດຶງເຮົາ
ເພາະ ເຮົາຍັງບໍ່ໄດ້ຂຶ້ນໄປຫາ ພຣະບິດາ ຂອງເຮົາ ແຕ່ເຈົ້າຈົ່ງໄປຫາພີ່ນ້ອງຂອງເຮົາແລະບອກ

ເຂົາວ່າ 'ເຮົາຈະຂຶ້ນເມືອຫາພຣະບິດາຂອງເຮົາແລະພຣະບິດາຂອງພວກທ່ານ ຈະເມືອຫາ
ພຣະເຈົ້າຂອງເຮົາແລະພຣະເຈົ້າຂອງພວກທ່ານ." [18]ນາງມາຣີອາມັກດາລາຈຶ່ງໄປບອກຂ່າວນີ້
ແກ່ພວກສາວົກວ່າ, "ຂ້ານ້ອຍໄດ້ເຫັນອົງພຣະຜູ້ເປັນເຈົ້າແລ້ວ" ແລະໄດ້ບອກເຂົາວ່າ ພຣະອົງ
ໄດ້ກ່າວຄຳເຫລົ່ານີ້ແກ່ຕົນ.

## ພຣະເຢຊູຊົງປະກົດແກ່ພວກສາວົກ

*(ມທ 28:16-20; ມຣກ 16:14-18; ລກ 24:36-49)*

[19]ຄ່ຳວັນນັ້ນເປັນວັນຕົ້ນສັປະດາ ເມື່ອສາວົກອັດປະຕູທີ່ເຂົາຢູ່ນັ້ນເພາະຢ້ານພວກຢິວ
ພຣະເຢຊູໄດ້ສະເດັດເຂົ້າມາຢູ່ຖ້າມກາງເຂົາ ແລ້ວຊົງກ່າວວ່າ, "ສັນຕິສຸກຈົ່ງມີແກ່ທ່ານທັງ-
ຫລາຍ." [20]ເມື່ອພຣະອົງຊົງກ່າວດັ່ງນັ້ນແລ້ວ ພຣະອົງກໍສະແດງພຣະຫັດແລະຂ້າງຂອງ ພຣະ-
ອົງໃຫ້ເຂົາເບິ່ງ ເມື່ອພວກສາວົກໄດ້ເຫັນອົງພຣະຜູ້ເປັນເຈົ້າແລ້ວກໍເກີດຄວາມຊົມຊື່ນຍິນດີ.
[21]ພຣະເຢຊູຊົງກ່າວກັບເຂົາອີກວ່າ, "ສັນຕິສຸກຈົ່ງຢູ່ກັບທ່ານທັງຫລາຍ ພຣະບິດາໄດ້ໃຊ້ເຮົາມາ
ຢ່າງໃດ ຝ່າຍເຮົາກໍໃຊ້ທ່ານທັງໄປຢ່າງນັ້ນ." [22]ເມື່ອຊົງກ່າວຢ່າງນັ້ນແລ້ວ ພຣະອົງຊົງລະບາຍ
ລົມອອກຈາກພຣະໂອດໃສ່ເຂົາ ໂດຍບອກວ່າ, "ທ່ານທັງຫລາຍຈົ່ງຮັບເອົາພຣະວິນຍານບໍລິ-
ສຸດ. [23]ຖ້າທ່ານທັງຫລາຍຈະຍົກເອົາຜິດບາບຂອງຜູ້ໃດ ຄວາມບາບຂອງຜູ້ນັ້ນພຣະເຈົ້າໄດ້ຊົງ
ຍົກເສຍແລ້ວ ແລະຖ້າທ່ານທັງຫລາຍກັກຄວາມຜິດບາບໃຫ້ຢູ່ກັບຜູ້ໃດ ພຣະເຈົ້າໄດ້ຊົງກັກ
ຄວາມຜິດບາບໃຫ້ຢູ່ກັບຜູ້ນັ້ນແລ້ວ."

## ໂທມາບໍ່ເຊື່ອ

[24]ຝ່າຍໂທມາທີ່ເອີ້ນກັນວ່າ ແຝດ ຊຶ່ງເປັນສາວົກຜູ້ໜຶ່ງໃນສິບສອງຄົນນັ້ນ ບໍ່ໄດ້ຢູ່ກັບເຂົາ
ເມື່ອພຣະເຢຊູສະເດັດມານັ້ນ. [25]ສາວົກອື່ນຈຶ່ງບອກໂທມາວ່າ, "ເຮົາໄດ້ເຫັນອົງພຣະຜູ້ເປັນ-
ເຈົ້າແລ້ວ" ແຕ່ໂທມາຕອບເຂົາເຫລົ່ານັ້ນວ່າ, "ຖ້າຂ້ອຍບໍ່ເຫັນຮອຍຕະປູທີ່ຝ່າພຣະຫັດ, ແລະບໍ່
ໄດ້ເອົານິ້ວມືຂອງຂ້ອຍແປະໃສ່ຮອຍຕະປູນັ້ນ, ແລະບໍ່ໄດ້ເອົາມືຂອງຂ້ອຍແປະໃສ່ຂ້າງເພິ່ນແລ້ວ
ຂ້ອຍຈະບໍ່ເຊື່ອ."

[26]ຄັນລ່ວງໄປໄດ້ແປດວັນແລ້ວພວກສາວົກຂອງພຣະອົງກໍຢູ່ກັນທີ່ເຮືອນນັ້ນອີກແລະໂທມາກໍ
ຢູ່ກັບເຂົາ ສ່ວນປະຕູກໍອັດໄວ້ ແຕ່ພຣະເຢຊູກໍໄດ້ສະເດັດເຂົ້າມາຢືນຢູ່ຖ້າມກາງເຂົາ ແລ້ວຊົງ
ກ່າວວ່າ, "ສັນຕິສຸກຈົ່ງມີຢູ່ກັບທ່ານທັງຫລາຍ." [27]ແລະພຣະອົງຊົງກ່າວກັບໂທມາວ່າ, "ຈົ່ງເດ່
ນິ້ວມືຂອງທ່ານມາລູບເບິ່ງຝາມືຂອງເຮົາ ຈົ່ງເດ່ມືຂອງທ່ານມາໃສ່ຂ້າງຂອງເຮົາ ຢ່າຂາດຄວາມ
ເຊື່ອແຕ່ຈົ່ງເຊື່ອ." [28]ໂທມາທູນຕອບວ່າ, "ອົງພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ແລະພຣະເຈົ້າ
ຂອງຂ້າພະອົງ." [29]ພຣະເຢຊູຊົງກ່າວກັບໂທມາວ່າ, "ເພາະໄດ້ເຫັນເຮົາທ່ານຈຶ່ງເຊື່ອຫລື ຜູ້ທີ່ບໍ່
ເຫັນເຮົາແຕ່ໄດ້ເຊື່ອກໍເປັນສຸກ."

## ຈຸດປະສົງຂອງໜັງສືນີ້

[30]ອັນໜຶ່ງພຣະເຢຊູໄດ້ຊົງເຮັດໝາຍສຳຄັນອື່ນໆ ອີກຫລາຍປະການ ຕໍ່ໜ້າພວກສາວົກ
ເຫລົ່ານັ້ນ ຊຶ່ງບໍ່ໄດ້ຈົດໄວ້ໃນໜັງສືເຫລັ້ມນີ້. [31]ແຕ່ທີ່ໄດ້ຈົດເຫດການເຫລົ່ານີ້ໄວ້ ກໍເພື່ອທ່ານ
ທັງຫລາຍຈະໄດ້ເຊື່ອວ່າ ພຣະເຢຊູຊົງເປັນພຣະຄຣິດພຣະບຸດຂອງພຣະເຈົ້າ ແລະເມື່ອມີ

ຄວາມເຊື່ອແລ້ວທ່ານ ກໍມີຊີວິດໂດຍພຣະນາມຂອງພຣະອົງ.

# ບົດທີ 21

## ພຣະເຢຊູຊົງປະກົດແກ່ສາວົກເຈັດຄົນ

[1]ຕໍ່ມາ, ພຣະເຢຊູ ໄດ້ຊົງສະແດງພຣະອົງ ແກ່ພວກສາວົກອີກທີ່ທະເລ ຕີເບເຣຍ ພຣະອົງຊົງ
ສະແດງພຣະອົງຢ່າງນີ້ຄື. [2]ພວກທີ່ຢູ່ພ້ອມກັນມີຊີໂມນ ເປໂຕ, ໂທມາທີ່ເອີ້ນວ່າແຝດ, ນະທາ-
ນາເອັນ ໄທບ້ານ ການາ ແຂວງ ຄາລີເລ, ລູກຊາຍທັງສອງຂອງ ເຊເບດາຍ ແລະສາວົກຂອງ
ພຣະອົງອີກສອງຄົນ. [3]ຊີໂມນ ເປໂຕບອກເຂົາວ່າ, "ຂ້ອຍຈະໄປຫາປາ" ຝ່າຍເຂົາຈຶ່ງຕອບວ່າ,
"ພວກເຮົາຈະໄປນຳເຈົ້າດ້ວຍ" ແລ້ວເຂົາກໍອອກໄປລົງເຮືອ ແຕ່ໃນຄືນນັ້ນເຂົາບໍ່ໄດ້ປາຈັກໂຕ.
[4]ເມື່ອກຳລັງຮຸ່ງ ເຊົ້າ ພຣະເຢຊູ ປະທັບຢືນຢູ່ທີ່ຝັ່ງ ແຕ່ພວກສາວົກບໍ່ຮູ້ວ່າ ແມ່ນ ພຣະເຢຊູ.
[5]ພຣະອົງຊົງຖາມເຂົາວ່າ, "ລູກເອີຍ, ພວກເຈົ້າມີຂອງກິນບໍ່" ເຂົາທູນຕອບວ່າ, "ບໍ່ມີ" [6]ພຣະອົງ
ຊົງກ່າວກັບເຂົາວ່າ "ຈົ່ງຖິ້ມມອງລົງເບື້ອງຂວາເຮືອແລ້ວຈະໄດ້ປາ" ເຂົາຈຶ່ງຖິ້ມມອງລົງແລະຖືກ
ປາຫລາຍ ຈົນດຶງຂຶ້ນບໍ່ໄດ້ເພາະເຫລືອແຮງ.
[7]ສາວົກທີ່ ພຣະເຢຊູ ຊົງຮັກໄດ້ບອກ ເປໂຕ ວ່າ, "ແມ່ນອົງ ພຣະຜູ້ເປັນເຈົ້າ ແຫລະ" ເມື່ອຊີ-
ໂມນ ເປໂຕ ໄດ້ຍິນວ່າເປັນອົງ ພຣະຜູ້ເປັນເຈົ້າ ທ່ານໄດ້ຈັບເອົາເສື້ອມານຸ່ງເພາະເປືອຍໂຕຢູ່ ແລ້ວ
ກໍໂດນລົງນ້ຳ. [8]ແຕ່ພວກສາວົກອື່ນໆ ນັ້ນໄດ້ເອົາເຮືອນ້ອຍລາກມອງທີ່ຖືກປາມາ ເພາະເຂົາບໍ່ຢູ່
ໄກຈາກຝັ່ງ ໄກປະມານສອງຮ້ອຍສອກເທົ່ານັ້ນ.
[9]ເມື່ອເຂົາຂຶ້ນຝັ່ງແລ້ວກໍເຫັນຖ່ານຕິດໄຟຢູ່ ພ້ອມທັງມີປາແລະເຂົ້າຈີ່ຂາງຢູ່. [10]ພຣະເຢຊູ ຊົງ
ບອກເຂົາວ່າ, "ປາທີ່ພວກເຈົ້າຫາໄດ້ມື້ກີ້ນີ້ຈົ່ງເອົາມາບາງໂຕ." [11]ຊີໂມນ ເປໂຕ ຈຶ່ງເຂົ້າໃນເຮືອດຶງ
ມອງຂຶ້ນຝັ່ງ ແລະມີປາໃຫຍ່ເຕັມຢູ່ຈຳນວນ 153 ໂຕ ເຖິງວ່າມີປາຫລາຍປານນັ້ນມອງກໍບໍ່ຂາດ.
[12]ພຣະເຢຊູ ຊົງບອກເຂົາວ່າ, "ພາກັນມາປັ້ນເຂົ້າເທາະ" ໃນພວກສາວົກບໍ່ມີໃຜກ້າຖາມພຣະອົງ
ວ່າ, "ທ່ານຄືໃຜ" ເພາະເຂົາຮູ້ຢູ່ວ່າຜູ້ນີ້ແຫລະ, ເປັນອົງ ພຣະຜູ້ເປັນເຈົ້າ. [13]ພຣະເຢຊູ ຊົງເຂົ້າມາ
ຈັບເອົາເຂົ້າຈີ່ແຈກໃຫ້ເຂົາ ແລະເອົາປາແຈກໃຫ້ເໝືອນກັນ. [14]ນີ້ເປັນເທື່ອທີສາມທີ່ ພຣະເຢຊູ ຊົງ
ສະແດງພຣະອົງ ແກ່ພວກສາວົກ ຫລັງຈາກທີ່ພຣະອົງຖືກຊົງບັນດານໃຫ້ເປັນຄືນມາຈາກຕາຍ
ແລ້ວ.

## "ຈົ່ງລ້ຽງແກະຂອງເຮົາ"

[15]ເມື່ອ ເຂົາປັ້ນ ເຂົ້າ ແລ້ວ ພຣະເຢຊູ ຊົງກ່າວກັບ ຊີໂມນ ເປໂຕ ວ່າ, "ຊີໂມນ ລູກ ໂຢຮັນ ເອີຍ,
ເຈົ້າຮັກເຮົາຫລາຍກວ່າເຫລົ່ານີ້ຫລື"[ກ] ເປໂຕທູນວ່າ "ໂດຍພຣະອົງເຈົ້າເອີຍ, ພຣະອົງຊົງຊາບ
ວ່າຂ້າພຣະອົງຮັກແພງພຣະອົງ"[ຂ] ພຣະອົງຊົງສັ່ງ ເປໂຕ ວ່າ, "ຈົ່ງລ້ຽງ ແກະໜຸ່ມຂອງ ເຮົາເນີ."
[16]ພຣະອົງຊົງກ່າວກັບ ເປໂຕ ເປັນເທື່ອທີສອງວ່າ, "ຊີໂມນລູກ ໂຢຮັນ ເອີຍ, ເຈົ້າຮັກເຮົາຫລື" ເປ-

---

[ກ]ອາດຈະໝາຍຄວາມວ່າ "ເຈົ້າຮັກເຮົາຫລາຍກວ່າເຈົ້າຮັກຄົນເຫລົ່ານີ້ຫລື" ຫລືວ່າ "ເຈົ້າຮັກເຮົາຫລາຍ
ກວ່າຄົນເຫລົ່ານີ້ຮັກເຮົາຫລື" ຫລືວ່າ "ເຈົ້າຮັກເຮົາຫລາຍກວ່າເຈົ້າຮັກສິ່ງເຫລົ່ານີ້ຫລື."

[ຂ]ຫລືວ່າ "ເປັນສະຫາຍຮັກຂອງພຣະອົງ." [ຂ]ຫລືວ່າ "ເປັນສະຫາຍຮັກຂອງເຮົາຫລື." [ຄ]ຫລືວ່າ ທີ່ພຣະ-
ອົງຊົງຖາມທ່ານເທື່ອທີສາມໂດຍຊົງກ່າວວ່າ, "ເຈົ້າເປັນສະຫາຍຮັກຂອງເຮົາຫລື."

ໂຕ ທູນຕອບວ່າ, "ໂດຍພຣະອົງເຈົ້າເອີຍ, ພຣະອົງຊົງຊາບວ່າຂ້າພຣະອົງຮັກແພງພຣະອົງ"
ພຣະອົງຊົງສັ່ງທ່ານວ່າ, "ຈົ່ງລ້ຽງຮັກສາແກະຂອງເຮົາເນີ." 17ພຣະອົງຊົງກ່າວກັບ ເປໂຕ ເປັນ
ເທື່ອທີສາມວ່າ, "ຊີໂມນ ລູກ ໂຢຮັນ ເອີຍ, ເຈົ້າຮັກແພງເຮົາຫລື"[ຂ] ເປໂຕກໍເປັນທຸກໃຈທີ່ພຣະອົງ
ຊົງຖາມທ່ານ ເທື່ອທີສາມວ່າ, "ເຈົ້າຮັກແພງເຮົາຫລື"[ຄ] ເປໂຕ ຈິ່ງທູນຕອບວ່າ, "ພຣະອົງເຈົ້າ
ເອີຍ, ພຣະອົງຊົງຊາບທຸກສິ່ງ ພຣະອົງຊົງຊາບວ່າຂ້າພຣະອົງຮັກແພງພຣະອົງ" ພຣະເຢຊູຊົງ
ສັ່ງທ່ານວ່າ, "ຈົ່ງລ້ຽງແກະຂອງເຮົາເນີ. 18ເຮົາບອກແກ່ເຈົ້າຕາມຄວາມຈິງວ່າ ເມື່ອເຈົ້າຍັງໜຸ່ມ
ເຈົ້າເຄີຍຄາດແອວຂອງເຈົ້າເອງ ແລະທ່ຽວໄປມາໃສໄດ້ຕາມໃຈເຈົ້າມັກ ແຕ່ເມື່ອເຈົ້າເຖົ້າແລ້ວ,
ເຈົ້າຈະຢຽດມືຂອງເຈົ້າອອກ ແລະຄົນອື່ນຈະຄາດແອວໃຫ້ແລະພາໄປບ່ອນເຈົ້າບໍ່ຢາກໄປ."
19(ທີ່ພຣະອົງຊົງກ່າວດັ່ງນີ້ກໍໝາຍຄວາມວ່າ ເປໂຕຈະຖວາຍກຽດຕິຍົດແດ່ພຣະເຈົ້າດ້ວຍການ
ຕາຍຢ່າງໃດ) ຄັນພຣະອົງຊົງກ່າວດັ່ງນີ້ແລ້ວຈຶ່ງຊົງສັ່ງ ເປໂຕວ່າ, "ເຈົ້າຈົ່ງຕາມເຮົາມາ."

## ສາວົກທີ່ພຣະອົງຊົງຮັກ

20ເປໂຕ ຫລຽວຫລັງ ເຫັນສາວົກຜູ້ທີ່ ພຣະເຢຊູ ຊົງຮັກກຳລັງຕາມມາ ຄືຜູ້ທີ່ເນີ້ງກາຍລົງອີງ
ພຣະຊວງຂອງພຣະອົງເມື່ອຮັບປະທານອາຫານແລງນັ້ນ ແລະທູນຖາມວ່າ, "ນາຍເຈົ້າເອີຍ, ຜູ້
ທີ່ຈະ ມອບທ່ານ ໄວ້ຄືຜູ້ໃດ." 21ເມື່ອ ເປໂຕ ເຫັນສາວົກຜູ້ນັ້ນແລ້ວ ຈຶ່ງທູນ ຖາມ ພຣະເຢຊູ ວ່າ,
"ພຣະອົງເຈົ້າເອີຍ, ຜູ້ນີ້ເດ, ຈະເປັນຢ່າງໃດ." 22ພຣະເຢຊູຊົງຕອບວ່າ, "ຖ້າເຮົາມີໃຈຢາກໃຫ້ຜູ້
ນີ້ຍືນຢູ່ຈົນເຖິງເຮົາມານັ້ນຈະເປັນທຸລະອັນໃດກັບເຈົ້າໜໍ ສ່ວນເຈົ້າຈົ່ງຕາມເຮົາມາ." 23ເຫດສັນ-
ນັ້ນຄຳທີ່ວ່າສາວົກຜູ້ນັ້ນຈະບໍ່ຕາຍ ຈຶ່ງຊ່າລືໄປໃນຖ້າມກາງຂອງພວກພີ່ນ້ອງ ແຕ່ພຣະເຢຊູບໍ່ໄດ້
ຊົງກ່າວວ່າສາວົກຜູ້ນັ້ນຈະບໍ່ຕາຍ ແຕ່ຊົງກ່າວວ່າ, "ຖ້າເຮົາມີໃຈຢາກໃຫ້ຜູ້ນີ້ຍືນຢູ່ຈົນເຖິງເຮົາມາ
ນັ້ນ ຈະເປັນທຸລະອັນໃດກັບເຈົ້າໜໍ."

24ແມ່ນສາວົກຜູ້ນີ້ແຫລະ, ທີ່ເປັນພະຍານເຖິງເຫດການເຫລົ່ານີ້ ແລະເປັນຜູ້ທີ່ບັນທຶກສິ່ງ
ເຫລົ່ານີ້ໄວ້ ແລະພວກເຮົາຮູ້ວ່າຄຳພະຍານຂອງຜູ້ນີ້ເປັນຄວາມຈິງ. 25ຍັງມີອີກຫລາຍສິ່ງທີ່
ພຣະເຢຊູຊົງກະທຳ ຖ້າຈະຂຽນໄວ້ຕາມລຳດັບທຸກປະການ ຂ້າພະເຈົ້າຄາດວ່າໝົດທັງໂລກກໍບໍ່
ມີບ່ອນພໍໄວ້ໜັງສືທີ່ຈະຂຽນນັ້ນ.

* * *

# ກິດຈະການ
# ຂອງພວກອັກຄະສາວົກ

## ບົດທີ 1
### ສັນຍາຈະຊົງປະທານພຣະວິນຍານບໍລິສຸດ
[1]ທ່ານ ເທໂອຟີໂລ ເອີຍ, ໃນໜັງສືເຫລັ້ມຕົ້ນ ຂ້າພະເຈົ້າໄດ້ກ່າວກ່ຽວກັບສິ່ງທັງປວງທີ່ ພຣະ-
ເຢຊູ ໄດ້ຊົງຕັ້ງຕົ້ນກະທຳ ແລະ ສັ່ງສອນ. [2]ຈົນ ເຖິງວັນທີ່ ພຣະເຈົ້າ ຊົງຮັບພຣະອົງຂຶ້ນ ເມື່ອ ຄື
ພາຍຫລັງທີ່ພຣະອົງຊົງສັ່ງ ໂດຍ ເດດ ພຣະວິນຍານບໍລິສຸດ ແກ່ພວກອັກຄະສາວົກທີ່ຊົງ ເລືອກໄວ້
ນັ້ນ. [3]ຄັນພຣະອົງຊົງທົນທຸກທໍລະມານ ແລ້ວໄດ້ຊົງສະແດງພຣະອົງແກ່ຄົນພວກນັ້ນດ້ວຍຫລັກ
ຖານຫລາຍຢ່າງ ພິສູດວ່າ ພຣະອົງຊົງພຣະຊົນຢູ່ ແລະໄດ້ຊົງປະກົດແກ່ເຂົາລະຫວ່າງສີ່ສິບວັນ
ແລະໄດ້ຊົງສົນທະນາກັບເຂົາເຖິງເລື່ອງລາຊະອານາຈັກຂອງ ພຣະເຈົ້າ. [4]ໃນເວລາທີ່ພຣະອົງຊົງ
ຮ່ວມປະຊຸມຢູ່ກັບເຂົາ[ກ] ຈຶ່ງຊົງສັ່ງເຂົາບໍ່ໃຫ້ອອກໄປຈາກກຸງ ເຢຣູຊາເລັມ ແຕ່ໃຫ້ຄອຍຮັບຕາມ
ພຣະສັນຍາຂອງ ພຣະບິດາ ຄືພຣະອົງໄດ້ຊົງບອກວ່າ, “ຕາມທີ່ທ່ານທັງຫລາຍໄດ້ຍິນຈາກເຮົາ
ນັ້ນແຫລະ. [5]ເພາະວ່າ ໂຢຮັນ ໃຫ້ບັບຕິສະມາດ້ວຍນໍ້າກໍແມ່ນ ແຕ່ຕໍ່ໄປອີກບໍ່ເທິງທ່ານທັງຫລາຍ
ຈະໄດ້ຮັບບັບຕິສະມາດ້ວຍ ພຣະວິນຍານບໍລິສຸດ.

### ການສະເດັດສູ່ສະຫວັນ
[6]ເມື່ອ ເຂົາໄດ້ປະຊຸມພ້ອມກັນ ເຂົາຈຶ່ງທູນຖາມພຣະອົງວ່າ, “ຂ້າ ແຕ່ອົງ ພຣະຜູ້ເປັນເຈົ້າ,
ພຣະອົງຈະຊົງຕັ້ງລາຊະອານາຈັກຄືນໃໝ່ໃຫ້ແກ່ພວກ ອິສຣາເອນ ໃນບັດນີ້ຫລື.” [7]ພຣະອົງຊົງ
ຕອບ ເຂົາວ່າ, “ບໍ່ແມ່ນໜ້າທີ່ຂອງພວກທ່ານທີ່ຈະຮູ້ເວລາຫລືຍາມກຳນົດ ຊຶ່ງ ພຣະບິດາ ໄດ້ຊົງ
ຕັ້ງໄວ້ດ້ວຍສິດຂອງພຣະອົງເອງ. [8]ແຕ່ທ່ານທັງຫລາຍຈະໄດ້ຮັບພຣະລາຊະທານລິດເດດ ເມື່ອ
ພຣະວິນຍານບໍລິສຸດ ຈະສະເດັດມາເຖິງພວກທ່ານ ແລະພວກທ່ານຈະເປັນພະຍານຝ່າຍເຮົາໃນ
ກຸງ ເຢຣູຊາເລັມ, ຕະຫລອດທົ່ວແຂວງ ຢູດາຍ, ກັບແຂວງ ຊາມາເຣຍ, ແລະຈົນເຖິງທີ່ສຸດປາຍ
ແຜ່ນດິນ ໂລກ.” [9]ເມື່ອພຣະອົງຊົງກ່າວດັ່ງນັ້ນ ແລ້ວ ພຣະເຈົ້າ ຊົງຮັບພຣະອົງຂຶ້ນ ເມື່ອຂະນະທີ່
ເຂົາກຳລັງ ເບິ່ງຢູ່ ແລະມີເມກມາຮັບພຣະອົງ ໃຫ້ພົ້ນຈາກສາຍຕາຂອງ ເຂົາ. [10]ເມື່ອ ເຂົາກຳລັງ
ແນມເບິ່ງຟ້າ ຂະນະທີ່ພຣະອົງສະເດັດຂຶ້ນເມື່ອນັ້ນ ເບິ່ງແມ, ມີສອງຄົນນຸ່ງເຄື່ອງຂາວມາປະກົດ
ຢືນຢູ່ໃກ້ເຂົາ. [11]ສອງຄົນນັ້ນຈຶ່ງກ່າວວ່າ, “ຊາວ ຄາລີເລ ເອີຍ, ເປັນຫຍັງພວກທ່ານຈຶ່ງຢືນເບິ່ງ
ທ້ອງຟ້າ ພຣະເຢຊູ ອົງນີ້ຊຶ່ງຊົງຮັບໄປຈາກພວກທ່ານຂຶ້ນ ເມືອສະຫວັນແລ້ວ ຈະສະເດັດມາອີກ
ເໝືອນຢ່າງທີ່ພວກທ່ານໄດ້ເຫັນພຣະອົງຂຶ້ນ ເມືອຍັງສະຫວັນນັ້ນ.”

---
[ກ]ຫລືວ່າ “ຊົງຮ່ວມຮັບປະທານນຳເຂົາ.”

## ເລືອກຄົນໜຶ່ງແທນຢູດາອິສະກາຣີອົດ

[12]ແລ້ວພວກອັກຄະສາວົກໄດ້ລົງມາຈາກພູທີ່ຊື່ວ່າ ເອໄລໂຍນ[ກ] ກັບຄືນໄປກຸງ ເຢຣູຊາເລັມ
ຊຶ່ງຢູ່ໄກຈາກກັນທໍ່ກັບລະຍະທາງທີ່ກຳນົດໃຫ້ຫຍ່ງໃນວັນຊະບາໂຕ.[ຂ] [13]ເມື່ອເຂົ້າກຸງແລ້ວເຂົາ
ເຫລົ່ານັ້ນຈຶ່ງຂຶ້ນເມືອຍັງຫ້ອງຊັ້ນເທິງທີ່ເຄີຍພັກຢູ່ນັ້ນ ມີເປໂຕ, ໂຢຮັນ, ຢາໂກໂບກັບອັນເດ-
ອາ, ຟີລິບກັບໂທມາ, ບາຣະໂທໂລມາຍກັບມັດທາຍ, ຢາໂກໂບລູກຂອງອາລະຟາຍ, ຊີໂມນ
ພັກຊາດນິຍົມ, ແລະຢູດາລູກຂອງຢາໂກໂບ. [14]ເຂົາເຫລົ່ານີ້ໄດ້ຮ່ວມໃຈກັນໄຫວ້ວອນດ້ວຍ
ຄວາມໝັ້ນໃຈ ພ້ອມກັບພວກແມ່ຍິງແລະນາງ ມາຣີອາ ມານດາຂອງພຣະເຢຊູ ທັງພວກນ້ອງ
ຊາຍຂອງພຣະອົງ. [15]ໃນຄາວນັ້ນ ເປໂຕ ໄດ້ຢືນຂຶ້ນຖ້າມກາງພີ່ນ້ອງທັງຫລາຍ ຊຶ່ງປະຊຸມກັນຢູ່
ຮ່ວມທັງໝົດມີປະມານຮ້ອຍຊາວຄົນ ແລະກ່າວວ່າ. [16]“ພີ່ນ້ອງທັງຫລາຍເອີຍ, ຂໍ້ພຣະຄຳພີທີ່
ພຣະວິນຍານບໍລິສຸດ ຊົງກ່າວລ່ວງໜ້າໄວ້ໂດຍພຣະໂອດຂອງກະສັດ ດາວິດ ຈຳເປັນຕ້ອງສຳ-
ເລັດ ຄຳນັ້ນທີ່ເວົ້າເຖິງຢູດາຊຶ່ງກາຍເປັນຜູ້ນຳຄົນທັງຫລາຍທີ່ໄປຈັບພຣະເຢຊູ. [17]ເພາະຢູດາ
ນັ້ນກໍນັບເຂົ້າໃນຈຳນວນພວກເຮົາ ແລະໄດ້ຮັບສ່ວນໃນການງານນີ້ເໝືອນກັນ. [18]ຝ່າຍຜູ້ນີ້ໄດ້
ເອົາຄ່າບຳເໜັດແຫ່ງການຊົ່ວຂອງຕົນໄປຊື້ດິນຕອນໜຶ່ງ ແລະກໍລົ້ມລົງແຕກກາງຕົວຈົນໄສ້ໄຫລ
ອອກທັງໝົດ. [19]ເຫດການນີ້ປະກົດແກ່ຊາວກຸງ ເຢຣູຊາເລັມ ທັງໝົດ ເຂົາຈຶ່ງເອີ້ນດິນຕອນນັ້ນ
ຕາມພາສາຂອງເຂົາວ່າ ອະເກັນດາມາ ຄືດິນເລືອດ. [20]ດ້ວຍມີຄຳຂຽນໄວ້ໃນພຣະທຳເພງສັນ-
ລະເສີນວ່າ, ‘ທີ່ຢູ່ຂອງມັນໃຫ້ກາຍເປັນບ່ອນຮ້າງເປົ່າຢ່າໃຫ້ມີຜູ້ໃດອາໃສຢູ່ໃນທີ່ນັ້ນ’ ແລະ‘ສ່ວນ
ໜ້າທີ່[ຄ] ຂອງມັນໃຫ້ຄົນອື່ນຮັບແທນ.’ [21]ເຫດສັນນັ້ນໃນບັນດາຜູ້ທີ່ເປັນພວກດຽວກັບເຮົາ ຕະ-
ຫລອດເວລາທີ່ພຣະອົງເຈົ້າ ເຢຊູ ສະເດັດເຂົ້າອອກກັບພວກເຮົາ. [22]ຄືຕັ້ງແຕ່ບັບຕິສະມາຂອງ
ໂຢຮັນ ຈົນເຖິງວັນທີ່ພຣະເຈົ້າຊົງຮັບພຣະອົງຂຶ້ນເມືອຈາກພວກເຮົາ ຄົນໜຶ່ງໃນພວກນີ້ຈະຕ້ອງ
ກາຍເປັນພະຍານກັບພວກເຮົາວ່າ ພຣະອົງໄດ້ຊົງຄືນພຣະຊົນແລ້ວ.” [23]ແລ້ວເຂົາໄດ້ສະເໜີຊື່
ສອງຄົນ ຄືໂຢເຊັບທີ່ເອີ້ນວ່າບາຣະຊາບາ ມີນາມສະກຸນວ່າຢູສະໂຕ ແລະມັດເທຍ. [24]ເຂົາຈຶ່ງ
ພາກັນອ້ອນວອນວ່າ, “ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຜູ້ຊົງຢັ່ງຮູ້ຈິດໃຈຂອງຄົນທັງປວງ ຂໍພຣະ-
ອົງຊົງຊີ້ບອກວ່າໃນສອງຄົນນີ້ພຣະອົງຊົງເລືອກເອົາຄົນໃດ. [25]ເພື່ອເຂົ້າຮັບສ່ວນໃນການປະຕິ-
ບັດນີ້ ແລະຮັບຕຳແໜ່ງເປັນອັກຄະສາວົກ ຊຶ່ງຢູດາໄດ້ປະຖິ້ມແລ້ວໄປສູ່ບ່ອນຂອງຕົນ.” [26]ເຂົາ
ຈຶ່ງໄດ້ຈົກສະຫລາກກັນ ແລະສະຫລາກນີ້ໄດ້ຕົກໃສ່ມັດເທຍ ມັດເທຍຈຶ່ງຖືກນັບເຂົ້າໃນພວກ
ອັກຄະສາວົກສິບເອັດຄົນນັ້ນ.

# ບົດທີ 2

## ພຣະວິນຍານບໍລິສຸດສະເດັດມາສະຖິດ

[1]ເມື່ອຄົບຮອບວັນເທດສະການ ເພັນເຕຄໍສະເຕ ເຂົາທັງໝົດໄດ້ພ້ອມກັນຢູ່ໃນບ່ອນດຽວ.
[2]ໃນທັນໃດນັ້ນເກີດມີສຽງມາຈາກຟ້າເໝືອນສຽງລົມພະຍຸກ້າ ກ້ອງສະໜັ່ນທົ່ວເຮືອນທີ່ເຂົານັ່ງຢູ່
ນັ້ນ. [3]ມີລີ້ນເປັນຮູບເໝືອນແປວໄຟໄດ້ປະກົດໃຫ້ເຂົາເຫັນແລະລີ້ນນັ້ນແຕກກະຈາຍອອກໄປຢູ່

[ກ]ເອໄລໂຢນແປວ່າສວນໝາກກອກເທດ. [ຂ]ປະມານໜຶ່ງກິໂລແມດ. [ຄ]ຄື ໜ້າທີ່ເປັນຜູ້ດູແລ.

ເທິງເຂົາທຸກຄົນຜູ້ລະລື້ນ. 4ເຂົາເຫລົ່ານັ້ນກໍເຕັມໄປດ້ວຍພຣະວິນຍານບໍລິສຸດ ແລະຕັ້ງຕົ້ນປາກ
ພາສາຕ່າງໆ ຕາມທີ່ພຣະວິນຍານຊົງໂຜດໃຫ້ເຂົາເວົ້ານັ້ນ.
5ຂະນະນັ້ນມີຊາວຢິວທີ່ຢຳເກງພຣະເຈົ້າມາຈາກທຸກປະເທດທົ່ວໃຕ້ຟ້າ ເຂົ້າມາພັກເຊົາຢູ່ໃນ
ກຸງເຢຣູຊາເລັມ. 6ເມື່ອສຽງນັ້ນໄດ້ເກີດຂຶ້ນ ຝູງຄົນຫລວງຫລາຍໄດ້ມາໂຮມກັນ ແລ້ວສະທຶ້ນ-
ສົນເທເພາະຕ່າງຄົນກໍຕ່າງໄດ້ຍິນພວກເຫລົ່ານັ້ນເວົ້າພາສາຂອງໃຜລາວ. 7ຄົນທັງປວງຈຶ່ງປະ-
ຫລາດແລະງຶດອັດສະຈັນໃຈເວົ້າກັນວ່າ, "ເບິ່ງແມ, ຄົນທັງຫລາຍທີ່ເວົ້າກັນຢູ່ນັ້ນແມ່ນຊາວຄາ-
ລີເລທັງໝົດ ບໍ່ແມ່ນຫລື. 8ເປັນແນວໃດພວກເຮົາທຸກຄົນຈຶ່ງໄດ້ຍິນເຂົາເວົ້າພາສາບ້ານເກີດ
ເມືອງນອນຂອງພວກເຂົາ. 9ຄືຊາວປາເທຍ, ຊາວເມເດຍ, ຊາວເອລາມ, ແລະຄົນທີ່ຢູ່ໃນປະ-
ເທດເມໂຊໂປຕາເມຍ, ແຂວງຢູດາຍ, ແລະປະເທດກາປາໂດເກຍ, ໃນແຂວງປົນໂຕແລະອາ-
ເຊຍ. 10ໃນແຂວງຟີເຄຍ, ແຂວງປ່າຟີເລຍ, ແລະປະເທດເອຢິບ, ໃນບາງສ່ວນຂອງປະເທດ
ລີເບຍທີ່ຕິດຕໍ່ກັບປະເທດກີເຣເນ, ກັບພວກທີ່ຈາກກຸງໂຣມມາເປັນແຂກຢັ້ງມຢາມ, ທັງຊາດຢິວ
ແລະຄົນທີ່ນັບຖືລັດທິຢິວ. 11ຊາວເກາະກະເຣເຕແລະຊາວປະເທດອາຫລັບ ພວກເຮົາໄດ້ຍິນ
ເຂົາກ່າວເຖິງມະຫາລາຊະກິດຂອງພຣະເຈົ້າໃນພາສາຂອງເຮົາເອງ. 12ເຂົາທັງຫລາຍຈຶ່ງອັດ-
ສະຈັນໃຈແລະສະທຶ້ນສົນເທເວົ້າກັນວ່າ, "ການນີ້ອາດຈະເປັນຢ່າງໃດໜໍ." 13ແຕ່ລາງຄົນເວົ້າ
ເຍາະເຍີ້ຍວ່າ, "ຄົນເຫລົ່ານັ້ນເຕັມໄປດ້ວຍເຫລົ້າອະງຸ່ນໃໝ່."

## ຄຳປາໄສຂອງເປໂຕໃນວັນເພັນເຕຄໍສະເຕ

14ແລ້ວເປໂຕຈຶ່ງຢືນຂຶ້ນກັບອັກຄະສາວົກສິບເອັດຄົນນັ້ນ ແລະໄດ້ກ່າວຄຳປາໄສດ້ວຍສຽງ
ດັງໃຫ້ເຂົາຟັງວ່າ, "ທ່ານຊາວຢິວ ແລະບັນດາຄົນທີ່ຢູ່ໃນກຸງເຢຣູຊາເລັມເອີຍ, ຈົ່ງຊາບເລື່ອງນີ້
ແລະຈົ່ງຕັ້ງຫູຟັງຖ້ອຍຄຳຂອງຂ້າພະເຈົ້າ. 15ດ້ວຍວ່າຄົນເຫລົ່ານີ້ບໍ່ໄດ້ເມົາເຫລົ້າເໝືອນດັ່ງພວກ
ທ່ານຄຶດນັ້ນ ເພາະຍັງເປັນເວລາສາມໂມງເຊົ້າຢູ່.[ກ] 16ແຕ່ການນີ້ແຫລະ, ແມ່ນຕາມທີ່ໄດ້ຊົງ
ກ່າວດ້ວຍໂຢເອນຜູ້ປະກາດພຣະທຳວ່າ,

17 'ພຣະເຈົ້າຊົງກ່າວວ່າ,
ໃນຄາວສຸດທ້າຍເຮົາຈະຖອກວິນຍານຂອງເຮົາ
ປະທານລົງໃສ່ມະນຸດທັງປວງ
ລູກຊາຍແລະລູກຍິງຂອງພວກທ່ານຈະທຳນວາຍ
ຊາຍໜຸ່ມຂອງພວກທ່ານຈະເຫັນນິມິດ
ແລະຊາຍເຖົ້າຂອງພວກທ່ານຈະຝັນເຫັນ.
18 ຝ່າຍເຮົາໃນຄາວນັ້ນເຮົາຈະຖອກວິນຍານຂອງເຮົາ
ປະທານລົງໃສ່ຂ້າໃຊ້ຊາຍຍິງຂອງເຮົາ
ແລະເຂົາຈະທຳນວາຍ.
19 ເຮົາຈະສະແດງການອັດສະຈັນໃນອາກາດເບື້ອງເທິງ
ແລະໝາຍສຳຄັນທີ່ແຜ່ນດິນໂລກເບື້ອງລຸ່ມ

[ກ]ສະໄໝປັດຈຸບັນເຄີຍເວົ້າກັນວ່າ ເກົ້າໂມງເຊົ້າ.

ຄືເລືອດແລະໄຟກັບອາຍຄວັນ.
20 ກ່ອນວັນອັນໃຫຍ່ແລະຮຸ່ງເຮືອງຂອງພຣະອົງເຈົ້າຈະມາເຖິງ
ດວງອາທິດຈະເກີດມືດມົວ
ດວງຈັນຈະກາຍເປັນເລືອດ.
21 ແລ້ວກໍຈະເປັນດັ່ງນີ້
ຄືບຸກຄົນໃດທີ່ຮ້ອງອອກພຣະນາມຂອງອົງ ພຣະຜູ້ເປັນເຈົ້າກໍຈະລອດພົ້ນ’.’
22“ຊາວ ອິສຣາເອນ ທັງຫລາຍ ເອີຍ, ຈົ່ງຟັງຖ້ອຍຄຳ ເຫລົ່ານີ້ ຄື ເຢຊູ ໄທ ນາຊາເຣັດ ເປັນຜູ້ທີ່
ພຣະເຈົ້າ ຊົງຊີ້ແຈງ ໃຫ້ພວກທ່ານຮູ້ ດ້ວຍການອິດທິລິດ, ການອັດສະຈັນ ແລະໝາຍສຳຄັນ
ຕ່າງໆ ຊຶ່ງ ພຣະເຈົ້າ ໄດ້ຊົງກະທຳໃນຖ້າມກາງພວກທ່ານດ້ວຍທ່ານຜູ້ນັ້ນ ດັ່ງທີ່ພວກທ່ານຮູ້ຢູ່
ແລ້ວ. 23ທ່ານຜູ້ນີ້ໄດ້ຖືກມອບໄວ້ ຕາມທີ່ ພຣະເຈົ້າ ໄດ້ຊົງກຳນົດຄາດໝາຍ ແລະຊົງຮູ້ໄວ້ລ່ວງ
ໜ້າກ່ອນນັ້ນ ພວກທ່ານໄດ້ໃຫ້ຄົນນອກສາດສະໜາຄຶງເພິ່ນໄວ້ທີ່ໄມ້ກາງແຂນແລະປະຫານຊີ-
ວິດເສຍ. 24ແຕ່ ພຣະເຈົ້າ ໄດ້ຊົງບັນດານໃຫ້ເປັນຄືນມາ ດ້ວຍຊົງປົດເພິ່ນໃຫ້ອອກຈາກຄວາມ-
ເຈັບປວດແຫ່ງຄວາມຕາຍ ເພາະຄວາມຕາຍຈະກັກຈ່ອງເພິ່ນໄວ້ບໍ່ໄດ້. 25ເພາະກະສັດ ດາວິດ
ໄດ້ຊົງກ່າວເຖິງເພິ່ນວ່າ,
‘ຂ້າພະເຈົ້າໄດ້ແນມເບິ່ງອົງ ພຣະຜູ້ເປັນເຈົ້າຢູ່ສະເໝີ
ເພາະວ່າພຣະອົງປະທັບຢູ່ກ້ຳຂວາຂອງ ພຣະເຈົ້າ
ເພື່ອຂ້າພະເຈົ້າຈະບໍ່ສະທ້ານຫວັ່ນໄຫວ.
26 ເພາະເຫດນີ້ຈິດໃຈຂອງຂ້າພະເຈົ້າຈຶ່ງປິຕິຍິນດີ
ແລະລີ້ນຂອງຂ້າພະເຈົ້າຈຶ່ງຮ້ອງຊົມຊື່ນຍິນດີ
ອີກປະການໜຶ່ງ, ເນື້ອຕົວຂອງຂ້າພະເຈົ້າຈະພັກຜ່ອນໃນຄວາມໄວ້ໃຈ.
27 ເພາະພຣະອົງເຈົ້າຈະບໍ່ຊົງປະຖິ້ມ
ຈິດວິນຍານຂອງຂ້າພຣະອົງໄວ້ໃນແດນມໍລະນາ
ທັງຈະບໍ່ໃຫ້ຜູ້ບໍລິສຸດຂອງພຣະອົງເປື່ອຍເນົ່າໄປ.
28 ພຣະອົງໄດ້ຊົງ ໂຜດໃຫ້ຂ້າພຣະອົງຮູ້ທາງ ແຫ່ງຊີວິດ
ພຣະອົງຈະຊົງ ໂຜດໃຫ້ຂ້າພຣະອົງ
ເຕັມບໍລິບູນດ້ວຍຄວາມຍິນດີ
ເພາະຢູ່ຕໍ່ພຣະພັກພຣະອົງ.’[ກ]
29“ພີ່ນ້ອງທັງຫລາຍ ເອີຍ, ຂ້າພະເຈົ້າມີສິດທີ່ຈະກ່າວຢ່າງເຊື່ອໝັ້ນ ໃຫ້ທ່ານທັງຫລາຍຟັງ
ເຖິງເລື່ອງກະສັດ ດາວິດບັນພະບຸລຸດຂອງເຮົານັ້ນວ່າ ທ່ານສິ້ນຊີວິດແລະຖືກບັນຈຸໄວ້ແລ້ວ ແລະ
ອຸບ ໂມງຂອງ ເພິ່ນຍັງຢູ່ຖ້າມກາງພວກເຮົາຈົນເຖິງທຸກວັນນີ້. 30ທ່ານເປັນຜູ້ທຳນວາຍ ແລະຊາບ
ວ່າ ພຣະເຈົ້າ ໄດ້ຊົງສັນຍາແກ່ເພິ່ນດ້ວຍຄຳສາບານວ່າ ຈະປະທານຜູ້ໜຶ່ງໃນວົງກະກຸນຂອງເພິ່ນ
ໃຫ້ປະທັບ ເທິງພຣະທີ່ນັ່ງຂອງ ເພິ່ນ. 31ກະສັດ ດາວິດ ກໍຊົງລ່ວງຮູ້ເຫດການນີ້ໄວ້ກ່ອນ ຈຶ່ງຊົງ

[ກ]ຫລືວ່າ ‘ເພາະໄດ້ເຫັນພຣະພັກຂອງພຣະອົງ.’

ກ່າວເຖິງການຄືນພຣະຊົນຂອງອົງ ພຣະຄຣິດວ່າ, 'ພຣະເຈົ້າບໍ່ໄດ້ຊົງປະຖິ້ມທ່ານໄວ້ໃນແດນມໍ-
ລະນາທັງເນື້ອຕົວຂອງທ່ານກໍຈະບໍ່ເປື່ອຍເນົ່າໄປ' [32]ພຣະເຢຊູນີ້ແຫລະ, ທີ່ພຣະເຈົ້າໄດ້ຊົງບັນ-
ດານໃຫ້ຄືນພຣະຊົນແລ້ວ ຝ່າຍຂ້າພະເຈົ້າທັງຫລາຍເປັນພະຍານເຖິງເລື່ອງນີ້. [33]ເມື່ອຊົງຖືກ
ຍົກຂຶ້ນຢູ່ທີ່ພຣະຫັດກ້ຳຂວາຂອງ ພຣະເຈົ້າ ແລະໄດ້ຊົງຮັບພຣະວິນຍານບໍລິສຸດຈາກພຣະບິດາ
ຕາມພຣະສັນຍາ ພຣະອົງໄດ້ຊົງຖອກພຣະວິນຍານນັ້ນລົງມາດັ່ງພວກທ່ານໄດ້ເຫັນແລະໄດ້ຍິນ
ແລ້ວນັ້ນ. [34]ເຫດວ່າກະສັດດາວິດບໍ່ຂຶ້ນໄປຍັງສະຫວັນ ແລະທ່ານເອງໄດ້ຊົງກ່າວວ່າ,

'ພຣະເຈົ້າຊົງກ່າວແກ່ອົງພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າວ່າ
ຈົ່ງນັ່ງທີ່ຂວາມືຂອງເຮົາ,
[35] ຈົນກວ່າເຮົາຈະປາບສັດຕູຂອງທ່ານໃຫ້ຢູ່ໃຕ້ຕີນຂອງທ່ານ.'

[36]ເຫດສັນນັ້ນໃຫ້ຍາດວົງອິສຣາເອນຮູ້ຄັກແນ່ວ່າ ພຣະເຈົ້າໄດ້ຊົງຍົກພຣະເຢຊູນີ້ ຊຶ່ງທ່ານທັງ-
ຫລາຍໄດ້ຕອກຕິດໄວ້ທີ່ໄມ້ກາງແຂນນັ້ນ ຊົງແຕ່ງຕັ້ງໃຫ້ເປັນທັງອົງພຣະຜູ້ເປັນເຈົ້າແລະເປັນ
ພຣະຄຣິດ."

[37]ເມື່ອຄົນທັງຫລາຍໄດ້ຍິນດັ່ງນັ້ນແລ້ວກໍຮູ້ສຶກເຈັບຊ້ຳກິນແໜງໃຈ ຈຶ່ງກ່າວແກ່ເປໂຕແລະ
ອັກຄະສາວົກອື່ນໆ ວ່າ, "ພີ່ນ້ອງເອີຍ, ພວກເຮົາຈະເຮັດຢ່າງໃດ." [38]ຝ່າຍເປໂຕຈຶ່ງກ່າວແກ່
ເຂົາວ່າ, "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຮັບບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດທຸກ
ຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານແລ້ວພວກທ່ານຈະໄດ້ຮັບຂອງພຣະລາຊະທານ
ຄືພຣະວິນຍານບໍລິສຸດ. [39]ດ້ວຍວ່າພຣະສັນຍານັ້ນກໍມີໄວ້ແກ່ທ່ານທັງຫລາຍ, ກັບລູກຫລານ
ຂອງພວກທ່ານ, ແລະແກ່ຄົນທັງປວງທີ່ຢູ່ຫ່າງໄກ ຄືແກ່ທຸກຄົນທີ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງພວກເຮົາຊົງເອີ້ນມາເຝົ້າພຣະອົງນັ້ນ." [40]ແລະເປໂຕໄດ້ກ່າວສັ່ງເຂົາຫລາຍປະການອີກ
ແລະເຕືອນສະຕິເຂົາວ່າ, "ຈົ່ງເອົາຕົວລອດພົ້ນຈາກເຊື້ອຊາດອັນຄົດລ້ຽວນີ້ເສຍ." [41]ຝ່າຍຄົນ
ທັງຫລາຍທີ່ໄດ້ເຊື່ອຮັບຟັງຖ້ອຍຄຳຂອງເປໂຕກໍໄດ້ຮັບບັບຕິສະມາໃນວັນນັ້ນມີຄົນຕື່ມເຂົ້າເປັນ
ລູກສິດປະມານສາມພັນຄົນ.

[42]ແລະເຂົາໄດ້ຕັ້ງໝັ້ນຄົງຢູ່ໃນຄຳສອນຂອງພວກອັກຄະສາວົກ, ໃນການຮ່ວມໃຈກັນ, ໃນ
ການຫັກເຂົ້າຈີ່[ກ] ແລະໃນການໄຫວ້ວອນ.

## ຊີວິດການເປັນຢູ່ຂອງພວກສິດ

[43]ທຸກຄົນເກີດມີຄວາມຢ້ານຢຳນັບຖື ສ່ວນພວກອັກຄະສາວົກກໍໄດ້ເຮັດການອັດສະຈັນແລະ
ໝາຍສຳຄັນຫລາຍປະການ. [44]ບັນດາຜູ້ທີ່ເຊື່ອຖືນັ້ນກໍໄດ້ຢູ່ຮ່ວມກັນ ແລະຊັບສິ່ງຂອງຂອງເຂົາ
ເຫລົ່ານັ້ນເຂົາກໍຖືເປັນຂອງສ່ວນຮ່ວມ. [45]ແລະເຂົາໄດ້ຂາຍທີ່ດິນແລະຊັບສິ່ງຂອງມາແຈກຢາຍ
ໃຫ້ຄົນທັງປວງຕາມທີ່ທຸກຄົນຕ້ອງການ. [46]ເຂົາໄດ້ໝັ້ນຮ່ວມປະຊຸມໃນບໍລິເວນພຣະວິຫານທຸກ
ວັນ ແລະຫັກເຂົ້າຈີ່ ຕາມເຮືອນຂອງເຂົາ ຮ່ວມຮັບປະທານອາຫານດ້ວຍຄວາມຊົມຊື່ນຍິນດີ
ແລະໃຈສັດຊື່. [47]ທັງໄດ້ສັນລະເສີນພຣະເຈົ້າ ແລະພົນລະເມືອງທັງໝົດກໍຊອບໃຈນຳ ຝ່າຍອົງ
ພຣະຜູ້ເປັນເຈົ້າໄດ້ຊົງໂຜດໃຫ້ຄົນທັງຫລາຍຊຶ່ງກຳລັງຈະລອດພົ້ນນັ້ນມາເຂົ້າກັບພວກສິດທຸກໆ

[ກ]ຄື ສິນລະນຶກ ເປັນຕົ້ນ.

ວັນ.

# ບົດທີ 3

## ຄົນງ່ອຍຜູ້ໜຶ່ງດີພະຍາດທີ່ປະຕູງາມ

[1]ຝ່າຍ ເປໂຕ ກັບ ໂຢຮັນ ກຳລັງຂຶ້ນໄປຈະເຂົ້າບໍລິເວນພຣະວິຫານ ເປັນຍາມອ້ອນວອນຄືເວລາ
ເກົ້າໂມງ.[ກ] [2]ມີຊາຍຄົນໜຶ່ງເປັນງ່ອຍຕັ້ງແຕ່ຢູ່ໃນທ້ອງແມ່ ຊຶ່ງເຂົາເຄີຍຫາມມາວາງໄວ້ທຸກວັນທີ່
ຮີມປະຕູບໍລິເວນພຣະວິຫານ ຊຶ່ງມີຊື່ວ່າປະຕູງາມ ເພື່ອໃຫ້ຂໍທານຈາກຄົນທີ່ເຂົ້າໄປໃນບໍລິເວນ
ພຣະວິຫານນັ້ນ. [3]ເມື່ອຄົນນັ້ນເຫັນ ເປໂຕ ກັບ ໂຢຮັນ ຈະເຂົ້າໄປໃນບໍລິເວນພຣະວິຫານກໍຂໍທານ.
[4]ຝ່າຍ ເປໂຕ ກັບ ໂຢຮັນ ກໍເພ່ງເບິ່ງຄົນນັ້ນບອກວ່າ "ຈົ່ງເບິ່ງພວກເຮົາ." [5]ແລະຄົນນັ້ນໄດ້ລໍເບິ່ງ
ນຶກວ່າຈະໄດ້ຮັບສິ່ງໜຶ່ງຈາກທ່ານ. [6]ແຕ່ ເປໂຕ ໄດ້ກ່າວວ່າ, "ເງິນແລະຄຳເຮົາບໍ່ມີ ແຕ່ອັນທີ່ເຮົາ
ມີຢູ່ນັ້ນ ເຮົາຈະໃຫ້ແກ່ເຈົ້າ ຄືໃນພຣະນາມແຫ່ງ ພຣະເຢຊູຄຣິດ ໄທ ນາຊາເຣັດ ຈົ່ງຍ່າງໄປ."
[7]ແລ້ວ ເປໂຕ ຈັບມືເບື້ອງຂວາຜູ້ນັ້ນດຶງຂຶ້ນ ໃນທັນໃດນັ້ນຕີນແລະຂໍ້ຕີນຂອງລາວກໍມີແຮງມາ.
[8]ລາວໄດ້ໂດດຢືນຂຶ້ນຍ່າງໄປມາ ແລ້ວເຂົ້າໄປໃນບໍລິເວນພຣະວິຫານພ້ອມກັນກັບທ່ານທັງສອງ
ຍ່າງແລະເຕັ້ນພ້ອມສັນລະເສີນ ພຣະເຈົ້າ ໄປ. [9]ພົນລະເມືອງທັງຫລາຍໄດ້ເຫັນຜູ້ນັ້ນຍ່າງໄປມາ
ສັນລະເສີນ ພຣະເຈົ້າ. [10]ຈິ່ງຮູ້ວ່າເປັນຄົນນັ້ນທີ່ເຄີຍນັ່ງຂໍທານຢູ່ທີ່ປະຕູງາມແຫ່ງບໍລິເວນພຣະວິ-
ຫານ ເຂົາຈິ່ງພາກັນເຕັມໄປດ້ວຍຄວາມງຶດງໍ້ອັດສະຈັນໃຈເພາະເຫດການທີ່ເກີດຂຶ້ນແກ່ຄົນນັ້ນ.

## ຄຳປາໄສຂອງເປໂຕທີ່ລະບຽງຂອງໂຊໂລໂມນ

[11]ເມື່ອຄົນນັ້ນຍັງຈັບໜ່ວງ ເປໂຕ ແລະ ໂຢຮັນ ຢູ່ ພົນລະເມືອງທັງປວງກໍອັດສະຈັນໃຈ ຈິ່ງ
ແລ່ນມາຫາເຂົາທີ່ລະບຽງຊຶ່ງມີຊື່ວ່າລະບຽງ ໂຊໂລໂມນ. [12]ເມື່ອ ເປໂຕ ໄດ້ເຫັນດັ່ງນັ້ນກໍກ່າວແກ່
ພົນລະເມືອງວ່າ, "ຊາວ ອິສຣາເອນ ເອີຍ, ເປັນຫຍັງພວກທ່ານພາກັນປະຫລາດໃຈດ້ວຍເລື່ອງ
ຂອງຄົນນີ້ ແລະເພ່ງເບິ່ງພວກເຮົາເໝືອນກັບວ່າ ພວກເຮົາໄດ້ເຮັດໃຫ້ຄົນນີ້ຍ່າງໄດ້ໂດຍອຳນາດ
ຂອງເຮົາເອງ ຫລືດ້ວຍການທີ່ພວກເຮົານັບຖືພຣະເຈົ້າຢ່າງຖືກຕ້ອງ. [13]ພຣະເຈົ້າ ຂອງ ອັບຣາ-
ຮາມ, ພຣະເຈົ້າ ຂອງ ອີຊາກ, ແລະຂອງ ຢາໂຄບ ຄືພຣະເຈົ້າຂອງບັນພະບຸລຸດຂອງພວກເຮົາ
ໄດ້ຊົງໂຜດປະທານພຣະກຽດແດ່ຜູ້ຮັບໃຊ້ຂອງພຣະອົງຄື ພຣະເຢຊູ ຊຶ່ງທ່ານທັງຫລາຍໄດ້ທໍລະ
ຍົດຕໍ່ພຣະອົງ ແລະໄດ້ປະຕິເສດຕໍ່ໜ້າ ປີລາດ ເມື່ອທ່ານຕັ້ງໃຈວ່າຈະປ່ອຍພຣະອົງໄປ. [14]ແຕ່
ພວກທ່ານໄດ້ປະຕິເສດພຣະອົງ ຊຶ່ງເປັນອົງບໍລິສຸດແລະຊອບທຳ ແລະໄດ້ຂໍທ່ານປ່ອຍຜູ້ຂ້າຄົນ
ໃຫ້ແກ່ທ່ານທັງຫລາຍ, [15]ຈິ່ງຂ້າພຣະອົງຜູ້ຊົງເປັນເຈົ້າຊີວິດເສຍ ແຕ່ພຣະເຈົ້າ ໄດ້ຊົງບັນດານ
ໃຫ້ພຣະອົງເປັນຄືນມາຈາກຕາຍ ຝ່າຍພວກເຮົາເປັນພະຍານໃນເລື່ອງນີ້. [16]ໂດຍຄວາມເຊື່ອໃນ
ພຣະນາມຂອງພຣະອົງ ພຣະນາມນັ້ນຈິ່ງເຮັດໃຫ້ຄົນນີ້ມີແຮງຂຶ້ນ ຄືຜູ້ຊຶ່ງທ່ານທັງຫລາຍເຫັນ
ແລະຮູ້ຈັກນີ້ກໍແມ່ນຄວາມເຊື່ອຊຶ່ງເກີດດ້ວຍພຣະອົງນັ້ນທີ່ໄດ້ເຮັດໃຫ້ຄົນນີ້ດີເປັນປົກກະຕິ ຕໍ່ໜ້າ
ທ່ານທັງຫລາຍ. [17]"ພີ່ນ້ອງທັງຫລາຍເອີຍ, ບັດນີ້ຂ້າພະເຈົ້າຮູ້ແລ້ວວ່າ ທ່ານທັງຫລາຍໄດ້ເຮັດ
ໄປຕາມຄວາມບໍ່ຮູ້ ທັງພວກເຈົ້ານາຍຂອງພວກທ່ານກໍເຮັດເໝືອນກັນ. [18]ແຕ່ເຫດເຫລົ່ານັ້ນທີ່

[ກ]ສະໄໝນີ້ເຄີຍເວົ້າວ່າ ບ່າຍສາມໂມງ.

ພຣະເຈົ້າ ໄດ້ຊົງປະກາດໄວ້ລ່ວງໜ້າ ໂດຍປາກຂອງພວກຜູ້ທຳນວາຍທັງໝົດວ່າ ພຣະຄຣິດ
ຂອງພຣະອົງຕ້ອງທົນທຸກທໍລະມານ ພຣະອົງຈຶ່ງຊົງໃຫ້ສຳເລັດດັ່ງນີ້. 19ເຫດສັນນັ້ນທ່ານທັງ-
ຫລາຍຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ແລ້ວຫລົບລ່າວຕ່າວຄືນ ເພື່ອພຣະເຈົ້າຈະຊົງລົບລ້າງຄວາມຜິດ
ບາບຂອງພວກທ່ານເສຍ. 20ເພື່ອເວລາແຫ່ງຄວາມພັກຜ່ອນຢ່ອນໃຈ ຈະໄດ້ມາຈາກພຣະພັກ
ຂອງອົງພຣະຜູ້ເປັນເຈົ້າ ເພື່ອພຣະອົງຈະໄດ້ຊົງໃຊ້ພຣະຄຣິດຊຶ່ງຊົງກຳນົດໄວ້ແລ້ວນັ້ນມາເພື່ອ
ທ່ານທັງຫລາຍ ຄືພຣະເຢຊູ. 21ພຣະອົງນັ້ນຟ້າສະຫວັນຈະຕ້ອງຮັບໄວ້ຈົນເຖິງເວລາເມື່ອສິ່ງ
ສາລະພັດຈະຕັ້ງຂຶ້ນໃໝ່ ຕາມທີ່ພຣະເຈົ້າໄດ້ຊົງກ່າວໄວ້ໂດຍປາກຂອງພວກຜູ້ປະກາດພຣະທຳ
ບໍລິສຸດຂອງພຣະອົງ ຕັ້ງແຕ່ຄາວບູຮານມາ. 22ສ່ວນໂມເຊໄດ້ກ່າວໄວ້ວ່າ ‘ພຣະຜູ້ເປັນເຈົ້າ,
ພຣະເຈົ້າ ຂອງທ່ານທັງຫລາຍ ຈະຊົງ ໃຫ້ຜູ້ປະກາດພຣະທຳຜູ້ໜຶ່ງ ເກີດຂຶ້ນ ຈາກຈຳພວກພີ່ນ້ອງ
ຂອງພວກທ່ານເໝືອນຢ່າງເຮົາ ພວກທ່ານຈະຕ້ອງເຊື່ອຟັງທຸກສິ່ງທີ່ເພິ່ນຈະບອກແກ່ພວກທ່ານ.
23ແລ້ວກໍຈະໄດ້ເປັນມາດັ່ງນີ້ວ່າ ທຸກຄົນທີ່ບໍ່ເຊື່ອຟັງຜູ້ປະກາດພຣະທຳຜູ້ນັ້ນ ຄົນນັ້ນຈະຖືກຕັດ-
ຂາດໃຫ້ຈິບຫາຍໄປຈາກພົນລະເມືອງ.’ 24ບັນດາຜູ້ປະກາດພຣະທຳທີ່ໄດ້ກ່າວໄວ້ ນັບຕັ້ງແຕ່
ຊາມູເອນເປັນລຳດັບມາ ກໍໄດ້ປະກາດເຖິງຄາວນີ້ເໝືອນກັນ. 25ທ່ານທັງຫລາຍເປັນລູກຫລານ
ຂອງຜູ້ປະກາດພຣະທຳແລະຂອງພຣະສັນຍາທີ່ພຣະເຈົ້າໄດ້ຊົງສັນຍາໄວ້ແກ່ບັນພະບຸລຸດຂອງ
ພວກທ່ານ ຄືໄດ້ຊົງກ່າວກັບອັບຣາຮາມວ່າ ‘ຄອບຄົວທັງໝົດທົ່ວແຜ່ນດິນໂລກຈະໄດ້ພອນ
ເພາະເຊື້ອສາຍຂອງເຈົ້າ.’ 26ເມື່ອພຣະເຈົ້າໄດ້ຊົງບັນດານໃຫ້ອົງຜູ້ຮັບໃຊ້ຂອງພຣະອົງເປັນຄືນ
ມາແລ້ວ ກໍຊົງໃຊ້ພຣະອົງມາຍັງທ່ານທັງຫລາຍກ່ອນ ເພື່ອອວຍພຣະພອນແກ່ພວກທ່ານ ໂດຍ
ໃຫ້ທຸກຄົນກັບຈາກການຊົ່ວຮ້າຍຂອງຕົນ.”

# ບົດທີ 4

## ເປໂຕແລະໂຢຮັນຕໍ່ໜ້າສານສູງສຸດ

1ຂະນະທີ່ເປໂຕກັບໂຢຮັນຍັງກ່າວກັບພົນລະເມືອງຢູ່ ພວກປະໂລຫິດ, ກັບນາຍທະຫານ
ຮັກສາພຣະວິຫານ, ແລະພວກຊາດູກາຍເຂົ້າມາຫາທ່ານທັງສອງ. 2ເຂົາຂັດໃຈໃນການທີ່ທ່ານ
ທັງສອງໄດ້ສັ່ງສອນ ແລະປະກາດແກ່ພົນລະເມືອງເຖິງເລື່ອງການຄືນມາຈາກຕາຍ ໂດຍອ້າງ
ວ່າພຣະເຢຊູຄືນພຣະຊົນແລ້ວ. 3ເຂົາຈຶ່ງຈັບທ່ານທັງສອງໄປຂັງໄວ້ໃນຄຸກຈົນເຖິງມື້ໜ້າ ເພາະ
ເປັນເວລາຄ່ຳແລ້ວ. 4ສ່ວນຄົນທີ່ໄດ້ຍິນຄຳສອນນັ້ນ ມີຫລາຍຄົນໄດ້ເຊື່ອຈຳນວນຜູ້ຊາຍຕື່ມຂຶ້ນ
ຈົນນັບໄດ້ປະມານຫ້າພັນຄົນ.

5ຕົກມື້ໜ້າມາມີການປະຊຸມກັນຢູ່ກຸງເຢຣູຊາເລັມລະຫວ່າງພວກເຈົ້ານາຍ, ພວກເຖົ້າແກ່,
ແລະພວກນັກທຳ. 6ທັງອັນນາມະຫາປະໂລຫິດ, ແລະກາຢະຟາ, ໂຢຮັນ, ອາເລັກຊັນໂດກັບ
ຄົນອື່ນໆ ທີ່ເປັນຍາດຂອງມະຫາປະໂລຫິດນັ້ນ. 7ເມື່ອເຂົາໄດ້ໃຫ້ເປໂຕແລະໂຢຮັນຢືນຢູ່ຖ້າມ-
ກາງພວກເຂົາແລ້ວ ຈຶ່ງໂຈດຖາມວ່າ, “ທ່ານທັງສອງໄດ້ເຮັດການນີ້ໂດຍລິດອັນໃດຫລືໂດຍ
ນາມອັນໃດ.” 8ຂະນະນັ້ນເປໂຕເຕັມໄປດ້ວຍພຣະວິນຍານບໍລິສຸດ ຈຶ່ງຕອບວ່າ, “ພວກທ່ານຜູ້
ປົກຄອງພົນລະເມືອງແລະເຖົ້າແກ່ທັງຫລາຍເອີຍ. 9ວັນນີ້ຖ້າທ່ານທັງຫລາຍຈະໂຈດຖາມຂ້າ-

ພະເຈົ້າທັງສອງ ເຖິງຄຸນຄວາມດີທີ່ໄດ້ເຮັດແກ່ຄົນພິການຜູ້ນັ້ນວ່າ ລາວໄດ້ດີປົກກະຕິດ້ວຍຢ່າງ-
ໃດ. [10]ກໍໃຫ້ທ່ານທັງຫລາຍກັບບັນດາພົນລະເມືອງ ອິສຣາເອນ ຊາບວ່າ ໂດຍພຣະນາມຂອງ
ພຣະເຢຊູຄຣິດ ໄທ ນາຊາເຣັດ ທີ່ທ່ານທັງຫລາຍໄດ້ຕອກຄຶງໄວ້ທີ່ໄມ້ກາງແຂນ ທີ່ ພຣະເຈົ້າ ໄດ້
ຊົງບັນດານໃຫ້ຄືນພຣະຊົນ ດ້ວຍພຣະອົງນັ້ນແຫລະ, ຄົນຜູ້ນີ້ຈຶ່ງດີປົກກະຕິຢືນຢູ່ຕໍ່ໜ້າພວກ
ທ່ານ. [11]ພຣະອົງນີ້ແຫລະ, 'ເປັນຫີນທີ່ພວກທ່ານຜູ້ເປັນພວກຊ່າງກໍ່ໄດ້ປະຖິ້ມບໍ່ຍອມໃຊ້ຊຶ່ງໄດ້
ກາຍເປັນຫີນເສົາເອກແລ້ວ.' [12]ໃນຜູ້ອື່ນຄວາມລອດພົ້ນບໍ່ມີ ດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ
ທີ່ຊົງປະທານແກ່ມະນຸດ ເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ພົ້ນ."

[13]ເມື່ອເຂົາໄດ້ເຫັນຄວາມກ້າຫານຂອງ ເປໂຕ ແລະ ໂຢຮັນ ແລະສັງເກດວ່າທ່ານທັງສອງຂາດ
ການສຶກສາ ແລະເປັນຄົນທຳມະດາສາມັນ ກໍປະຫລາດໃຈ ແລ້ວສຳນຶກໄດ້ວ່າຄົນທັງສອງເຄີຍ
ຢູ່ກັບ ພຣະເຢຊູ. [14]ເມື່ອເຂົາເຫັນຄົນທີ່ດີພະຍາດນັ້ນຢືນຢູ່ກັບ ເປໂຕ ກັບ ໂຢຮັນ ເຂົາຈຶ່ງບໍ່ມີຂໍ້ທີ່
ຈະປະຕິເສດໄດ້. [15]ແຕ່ເມື່ອສັ່ງ ເປໂຕ ກັບ ໂຢຮັນ ອອກໄປຈາກທີ່ປະຊຸມແລ້ວ ເຂົາຈຶ່ງປຶກສາກັນ.
[16]ວ່າ, "ພວກເຮົາຈະເຮັດແນວໃດກັບຄົນທັງສອງນີ້ໜໍ ເພາະການທີ່ເຂົາໄດ້ເຮັດໝາຍສຳຄັນ ກໍ
ລືຊາປະກົດແກ່ຄົນທັງປວງທີ່ຢູ່ໃນກຸງ ເຢຣູຊາເລັມ ແລ້ວ ແລະພວກເຮົາກໍປະຕິເສດບໍ່ໄດ້. [17]ແຕ່
ເພື່ອບໍ່ໃຫ້ເລື່ອງນີ້ແຜ່ກວ້າງອອກໄປໃນຖ້າມກາງພົນລະເມືອງ ໃຫ້ພວກເຮົາຫ້າມຂູ່ເຂົາບໍ່ໃຫ້ອ້າງ
ອອກນາມຊື່ນັ້ນແກ່ຜູ້ໃດຈັກເທື່ອ." [18]ເຂົາຈຶ່ງເອີ້ນ ເປໂຕ ແລະ ໂຢຮັນ ມາ ແລ້ວຫ້າມເດັດຂາດບໍ່
ໃຫ້ກ່າວຫລືສອນຢ່າງໜຶ່ງຢ່າງໃດໃນນາມຂອງ ພຣະເຢຊູ ນັ້ນ. [19]ຝ່າຍ ເປໂຕ ກັບ ໂຢຮັນ ໄດ້ຕອບ
ເຂົາວ່າ, "ທີ່ຈະຟັງຄຳຂອງພວກທ່ານຫລາຍກວ່າຈະຟັງຄຳຂອງ ພຣະເຈົ້າ ຈະເປັນການຊອບທຳ
ຕໍ່ພຣະພັກ ພຣະເຈົ້າ ຫລື ຂໍພວກທ່ານຈົ່ງພິຈາລະນາເບິ່ງ. [20]ເພາະວ່າຈະເປັນໄປບໍ່ໄດ້ ທີ່ຈະໃຫ້
ພວກຂ້າພະເຈົ້າອຳໄວ້ໃນສິ່ງທີ່ໄດ້ເຫັນແລະໄດ້ຍິນແລ້ວ." [21]ແລະເມື່ອໄດ້ຂູ່ເຂົາທັງສອງອີກແລ້ວ
ກໍປ່ອຍໄປ ບໍ່ເຫັນມີເຫດທີ່ຈະໃສ່ໂທດຢ່າງໃດ ເພາະເຫັນແກ່ພົນລະເມືອງດ້ວຍວ່າຄົນທັງປວງ
ພາກັນສັນລະເສີນ ພຣະເຈົ້າ ເນື່ອງດ້ວຍ ເຫດການທີ່ ເກີດຂຶ້ນນັ້ນ. [22]ເພາະວ່າຄົນທີ່ດີພະຍາດ
ດ້ວຍໝາຍສຳຄັນນັ້ນມີອາຍຸເກີນກວ່າສີ່ສິບປີແລ້ວ.

## ພວກສິດອ້ອນວອນຂໍຄວາມກ້າຫານ

[23]ເມື່ອຖືກປ່ອຍແລ້ວທ່ານທັງສອງກໍໄປຫາເພື່ອນຝູງຂອງຕົນ ແລະເລົ່າເລື່ອງທັງໝົດທີ່ພວກ
ປະໂລຫິດຕົນໃຫຍ່ແລະພວກເຖົ້າແກ່ໄດ້ເວົ້າແກ່ຕົນນັ້ນ. [24]ເມື່ອເຂົາທັງຫລາຍໄດ້ຍິນແລ້ວ ກໍ
ພ້ອມໃຈກັນຍົກສຽງຂຶ້ນທູນ ພຣະເຈົ້າ ວ່າ, "ຂ້າແດ່ ພຣະເຈົ້າ ຕົນມະຫາລາດ ພຣະອົງໄດ້ຊົງສ້າງ
ຟ້າສະຫວັນ, ແຜ່ນດິນໂລກ, ນ້ຳທະເລ, ກັບສັບພະສິ່ງທີ່ຢູ່ໃນບ່ອນເຫລົ່ານັ້ນ. [25]ພຣະອົງຊົງ
ກ່າວໄວ້ໂດຍ ພຣະວິນຍານບໍລິສຸດ ດ້ວຍປາກ ດາວິດ ບັນພະບຸລຸດຂອງຂ້າພຣະອົງທັງຫລາຍ ຄື
ຜູ້ຮັບໃຊ້ຂອງພຣະອົງວ່າ,

'ດ້ວຍເຫດໃດຊົນຕ່າງຊາດຈຶ່ງຮ້າຍແຮງຂຶ້ນ
ແລະຊົນຊາດທັງຫລາຍຈຶ່ງຄຶດປອງຮ້າຍເປັນການເປົ່າໆ
[26] ບັນດາກະສັດແຫ່ງແຜ່ນດິນໂລກຕັ້ງຕົວຂຶ້ນ
ແລະຜູ້ປົກຄອງໄດ້ຊຸມນຸມກັນ

ຕໍ່ສູ້ອົງພຣະຜູ້ເປັນເຈົ້າ ແລະຕໍ່ສູ້ຜູ້ທີ່ພຣະອົງຊົງຫົດສົງ.'[ກ]
[27]ຈິງແທ້ໃນເມືອງນີ້ ທັງເຮໂຣດ ແລະປົນຕີໂອປີລາດ, ກັບຄົນຕ່າງຊາດ, ແລະຊາວອິສຣາ-
ເອນ ໄດ້ປະຊຸມກັນຕໍ່ສູ້ພຣະເຢຊູຜູ້ຮັບໃຊ້ບໍລິສຸດຂອງພຣະອົງ ທີ່ຊົງຫົດສົງໄວ້ແລ້ວ, [28]ເພື່ອໃຫ້
ສິ່ງສາລະພັດຕາມທີ່ພຣະຫັດແລະພຣະໄທຂອງພຣະອົງຊົງກຳນົດ ຕັ້ງແຕ່ກ່ອນມາແລ້ວນັ້ນເກີດ
ຂຶ້ນ. [29]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ບັດນີ້ຂໍໂຜດທອດພຣະເນດການຂູ່ເຂັນຂອງເຂົາ ແລະຂໍ
ໂຜດໃຫ້ຜູ້ຮັບໃຊ້ຂອງພຣະອົງກ່າວພຣະທຳຂອງພຣະອົງດ້ວຍໃຈກ້າ, [30]ໂດຍການຊົງຢຽດພຣະ-
ຫັດຂອງພຣະອົງອອກ ເພື່ອເຮັດໃຫ້ດີພະຍາດແລະໂຜດໃຫ້ໝາຍສຳຄັນກັບການອັດສະຈັນບັງ-
ເກີດຂຶ້ນໂດຍພຣະນາມຂອງພຣະເຢຊູຜູ້ຮັບໃຊ້ບໍລິສຸດຂອງພຣະອົງ. [31]ເມື່ອເຂົາອ້ອນວອນຈົບ
ລົງແລ້ວ ບ່ອນທີ່ເຂົາຊຸມນຸມກັນນັ້ນກໍສະທ້ານຫວັ່ນໄຫວ ແລະຄົນເຫລົ່ານັ້ນໄດ້ເຕັມໄປດ້ວຍ
ພຣະວິນຍານບໍລິສຸດທຸກຄົນ ຈຶ່ງພາກັນກ່າວພຣະທຳຂອງພຣະເຈົ້າດ້ວຍໃຈກ້າຫານ.

## ທຸກສິ່ງເປັນຂອງກາງ

[32]ອັນໜຶ່ງຄົນທັງປວງທີ່ເຊື່ອນັ້ນກໍເປັນໜຶ່ງໃຈດຽວກັນ ແລະບໍ່ມີຈັກຄົນອ້າງວ່າສິ່ງຂອງທີ່ຕົນມີ
ຢູ່ນັ້ນເປັນຂອງສ່ວນຕົວ ແຕ່ຖືວ່າສິ່ງຂອງທັງໝົດເປັນຂອງກາງ. [33]ຝ່າຍພວກອັກຄະສາວົກກໍ
ເຕັມໄປດ້ວຍລິດເດດອັນໃຫຍ່ ແລະເປັນພະຍານວ່າພຣະເຢຊູເຈົ້າໄດ້ຊົງຄືນພຣະຊົນແລ້ວ
ແລະພຣະຄຸນອັນໃຫຍ່ໄດ້ຢູ່ກັບເຂົາທຸກຄົນ. [34]ເພາະວ່າໃນພວກເຂົານັ້ນບໍ່ມີຜູ້ໃດຂັດສົນ ດ້ວຍ
ວ່າບຸກຄົນໃດມີໄຮ່ນາຫລືຢ້າວເຮືອນກໍໄດ້ຂາຍເສຍ ແລະນຳເງິນຄ່າຂອງທີ່ຂາຍໄດ້ນັ້ນ. [35]ມາ
ມອບໄວ້ໃນມືຂອງພວກອັກຄະສາວົກ ແລ້ວຈຶ່ງມີການແຈກຢາຍໃຫ້ທຸກຄົນຕາມທີ່ຕ້ອງການ.
[36]ຝ່າຍໂຢເຊັບທີ່ອັກຄະສາວົກເອີ້ນວ່າບາຣະນາບາ (ແປວ່າ ຜູ້ມີໃຈອຸດໜຸນ) ເປັນພວກເລວີ
ໄທເກາະກຸບໂຣ. [37]ກໍໄດ້ຂາຍນາຂອງຕົນທົ່ງໜຶ່ງ ແລ້ວນຳເງິນຈຳນວນນັ້ນມາມອບໃຫ້ແກ່ພວກ
ອັກຄະສາວົກ.

# ບົດທີ 5

## ອານາເນຍກັບຊະຟີຣາ

[1]ແຕ່ມີຊາຍຄົນໜຶ່ງຊື່ອານາເນຍ ພ້ອມກັນກັບພັນລະຍາຊື່ຊະຟີຣາ ໄດ້ຂາຍທີ່ດິນຂອງຕົນ.
[2]ສ່ວນເງິນຈຳນວນນັ້ນອານາເນຍໄດ້ມ້ຽນໄວ້ສ່ວນໜຶ່ງ ແລະພັນລະຍາຂອງຕົນກໍຮູ້ນຳ ແລ້ວ
ສ່ວນໜຶ່ງອານາເນຍໄດ້ນຳມາມອບໃຫ້ແກ່ພວກອັກຄະສາວົກ. [3]ຝ່າຍເປໂຕຈຶ່ງຖາມວ່າ, "ອາ-
ນາເນຍເອີຍ, ດ້ວຍເຫດໃດໃຈຂອງເຈົ້າເຕັມໄປດ້ວຍຊາຕານເຈົ້າຈຶ່ງຕົວະຕໍ່ພຣະວິນຍານບໍລິ-
ສຸດ ແລະໄດ້ມ້ຽນຄ່າທີ່ດິນນັ້ນໄວ້ສ່ວນໜຶ່ງ. [4]ເມື່ອດິນນັ້ນບໍ່ທັນໄດ້ຂາຍກໍເປັນຂອງເຈົ້າ ບໍ່ແມ່ນ
ຫລື ແລະເມື່ອຂາຍແລ້ວເງິນນັ້ນກໍຢູ່ໃນອຳນາດຂອງເຈົ້າ ບໍ່ແມ່ນຫລື ມີເຫດໃດເກີດຂຶ້ນຈຶ່ງເຮັດ
ໃຫ້ເຈົ້າຄຶດດັ່ງນີ້ໃນໃຈທີ່ເຈົ້າໄດ້ຕົວະນັ້ນບໍ່ແມ່ນຕົວະມະນຸດແຕ່ຕົວະຕໍ່ພຣະເຈົ້າ."
[5]ເມື່ອອານາເນຍໄດ້ຍິນຖ້ອຍຄຳເຫລົ່ານັ້ນກໍລົ້ມລົງຕາຍເສຍ ຄັນຄົນທັງປວງໄດ້ຍິນເລື່ອງນັ້ນ
ກໍເກີດມີຄວາມສະດຸ້ງຕົກໃຈ. [6]ຝ່າຍພວກຊາຍໜຸ່ມໄດ້ລຸກຂຶ້ນຫໍ່ສົບລາວໄວ້ ແລ້ວຫາມອອກໄປ

[ກ]ຫລື "ຕໍ່ສູ້ພຣະຄຣິດ."

ຟັງເສຍ. 7ຫລັງຈາກນັ້ນປະມານສາມຊົ່ວໂມງພັນລະຍາຂອງລາວກໍເຂົ້າມາ ໂດຍຍັງບໍ່ຮູ້ເຖິງ
ເລື່ອງທີ່ເກີດຂຶ້ນນັ້ນ. 8ຝ່າຍ ເປໂຕ ໄດ້ຖາມນາງວ່າ, "ຈົ່ງບອກເຮົາດູ ເຈົ້າທັງສອງຂາຍທີ່ດິນໄດ້
ລາຄາເທົ່ານັ້ນຫລື" ນາງໄດ້ຕອບວ່າ, "ໂດຍ, ໄດ້ເທົ່ານັ້ນແລ້ວ." 9ເປໂຕ ຈຶ່ງຖາມນາງວ່າ,
"ເປັນດ້ວຍເຫດໃດເຈົ້າທັງສອງຈຶ່ງພ້ອມໃຈກັນທົດລອງ ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ເບິ່ງ
ແມ, ຕີນຂອງພວກທີ່ໄປຝັງສົບຜົວຂອງເຈົ້າກໍມາເຖິງປະຕູແລ້ວ ເຂົາຈະຫາມສົບຂອງເຈົ້າອອກ
ໄປເໝືອນກັນ." 10ໃນທັນໃດນັ້ນນາງກໍລົ້ມລົງຕາຍແຄມຕີນຂອງ ເປໂຕ ເມື່ອພວກຊາຍໜຸ່ມເຂົ້າ
ມາກໍເຫັນວ່ານາງຕາຍແລ້ວ ເຂົາຈຶ່ງຫາມສົບນັ້ນອອກໄປຝັງໄວ້ຂ້າງສົບສາມີຂອງນາງ. 11ຝ່າຍ
ຄຣິສຕະຈັກທັງໝົດ ແລະຄົນທັງປວງທີ່ໄດ້ຍິນເຫດການນີ້ ກໍເກີດມີຄວາມສະດຸ້ງຕົກໃຈ.

## ໝາຍສຳຄັນແລະການອັດສະຈັນຫລາຍຢ່າງເກີດຂຶ້ນ

12ມີໝາຍສຳຄັນແລະການອັດສະຈັນຫລາຍຢ່າງທີ່ເກີດຂຶ້ນດ້ວຍມືຂອງພວກອັກຄະສາວົກໃນ
ທ່າມກາງພົນລະເມືອງ...... (ພວກສາວົກທັງໝົດໄດ້ພ້ອມກັນຢູ່ໃນລະບຽງຂອງ ໂຊໂລໂມນ.
13ສ່ວນຄົນອື່ນໆ ນັ້ນບໍ່ມີໃຜກ້າເຂົ້າມາຕິດພັນຢູ່ນຳ ແຕ່ພົນລະເມືອງສັນລະເສີນຍ້ອງຍໍເຂົາຢູ່.
14ແລະ ມີຊາຍ ແລະ ຍິງ ຈຳນວນ ຫລວງຫລາຍ ທີ່ ເຊື່ອ ໃນ ພຣະຜູ້ເປັນເຈົ້າ ຕື່ມ ເຂົ້າ ມາ ຫລາຍ ກວ່າ
ເກົ່າອີກ). 15ຈົນວ່າເຂົາໄດ້ເອົາຄົນເຈັບປ່ວຍໃສ່ບ່ອນນອນນ້ອຍໃຫຍ່ ຫາມອອກໄປວາງໄວ້ຕາມ
ຫົນທາງ ເພື່ອວ່າ ເມື່ອ ເປໂຕ ຍ່າງຜ່ານໄປນັ້ນ ຢ່າງໜ້ອຍ ເງົາຂອງທ່ານຈະ ໄດ້ຖືກບາງຄົນ.
16ແລະມີຄົນຈຳນວນຫລາຍໄດ້ອອກມາຈາກເມືອງຕ່າງໆ ທີ່ຢູ່ລ້ອມຮອບກຸງ ເຢຣູຊາເລັມ ນຳເອົາ
ຄົນເຈັບປ່ວຍມາ ແລະຄົນທີ່ຖືກຜີຖ່ອຍຮ້າຍບຽດບຽນ ແລະທຸກຄົນກໍດີເປັນປົກກະຕິ.

## ພວກອັກຄະສາວົກຖືກຂົ່ມເຫງ

17ຝ່າຍມະຫາປະໂລຫິດກັບພັກພວກທັງໝົດຂອງຕົນ ຄືພວກຊາດູກາຍກໍລຸກຂຶ້ນແລະເຕັມໄປ
ດ້ວຍຄວາມເຫິງສາ. 18ຈຶ່ງໄດ້ຈັບເອົາພວກອັກຄະສາວົກໄປຂັງໄວ້ໃນຄຸກຕະລາງ. 19ແຕ່ໃນເວ-
ລາກາງຄືນ ມີເທວະດາຕົນໜຶ່ງຂອງ ພຣະຜູ້ເປັນເຈົ້າ ໄດ້ມາໄຂປະຕູຄຸກແລະນຳພວກອັກຄະສາ-
ວົກອອກໄປໂດຍບອກວ່າ. 20"ຈົ່ງໄປຢືນຢູ່ໃນບໍລິເວນພຣະວິຫານ ປະກາດບັນດາຖ້ອຍຄຳເລື່ອງ
ຊີວິດນີ້ໃຫ້ພົນລະເມືອງຟັງ." 21ເມື່ອອັກຄະສາວົກໄດ້ຍິນຢ່າງນັ້ນແລ້ວ ພໍຮຸ່ງເຊົ້າກໍເຂົ້າໄປຕັ້ງຕົ້ນ
ສັ່ງສອນໃນບໍລິເວນພຣະວິຫານ.

ຝ່າຍມະຫາປະໂລຫິດກັບພັກພວກຂອງຕົນ ກໍໄດ້ເອີ້ນສະມາຊິກແຫ່ງສານສູງສຸດ ຄືພວກເຖົ້າ
ແກ່ຂອງຊົນຊາດ ອິສຣາເອນ ໃຫ້ມາປະຊຸມ ແລ້ວໃຊ້ຄົນໄປຍັງຄຸກໃຫ້ພາພວກອັກຄະສາວົກອອກ
ມາ. 22ແຕ່ພໍພວກນັ້ນໄປເຖິງກໍບໍ່ເຫັນພວກອັກຄະສາວົກຢູ່ໃນຄຸກນັ້ນ ຈຶ່ງກັບຄືນມາລາຍງານ.
23ໂດຍກ່າວວ່າ, "ພວກຂ້ານ້ອຍໄດ້ເຫັນປະຕູຄຸກອັດແໜ້ນໝັ້ນຄົງ ແລະຄົນເຝົ້າຍາມກໍຢືນຢູ່ໜ້າ
ປະຕູນັ້ນ ແຕ່ເມື່ອໄຂເຂົ້າໄປຂ້າງໃນກໍບໍ່ເຫັນຜູ້ໃດ." 24ເມື່ອນາຍທະຫານຮັກສາພຣະວິຫານກັບ
ພວກປະໂລຫິດຕົນໃຫຍ່ໄດ້ຍິນດັ່ງນັ້ນ ກໍສະຫງົບສົນເທໃນເລື່ອງຂອງອັກຄະສາວົກວ່າຈະເປັນ
ຢ່າງໃດຕໍ່ໄປ. 25ແລ້ວມີຜູ້ໜຶ່ງມາແຈ້ງຄວາມຕໍ່ເຂົາວ່າ, "ຄົນນັ້ນທີ່ທ່ານທັງຫລາຍໄດ້ຂັງໄວ້ໃນ
ຄຸກນັ້ນ ກຳລັງຢືນສັ່ງສອນພົນລະເມືອງຢູ່ໃນບໍລິເວນພຣະວິຫານ." 26ແລ້ວພວກນາຍທະຫານ
ຮັກສາພຣະວິຫານກັບພວກເຈົ້າພະນັກງານ ໄດ້ໄປນຳພວກອັກຄະສາວົກມາໂດຍດີ ເພາະຢ້ານ

ວ່າພົນລະເມືອງຈະຄວ່າງຫີນໃສ່.
27ເມື່ອເຂົາໄດ້ນຳພວກອັກຄະສາວົກມາແລ້ວ ກໍໃຫ້ຢືນຢູ່ຕໍ່ໜ້າທີ່ປະຊຸມ ແລ້ວມະຫາປະໂລ-
ຫິດຈຶ່ງໂຈດຖາມເຂົາໂດຍກ່າວວ່າ. 28"ພວກເຮົາໄດ້ສັ່ງຫ້າມໝູ່ເຈົ້າຢ່າງແຂງແຮງບໍ່ໃຫ້ສອນອອກ
ນາມຊື່ນີ້ ແຕ່ເບິ່ງແມ, ໝູ່ເຈົ້າໄດ້ໃຫ້ຄຳສອນນັ້ນແຜ່ໄປທົ່ວກຸງເຢຣູຊາເລັມ ແລະປາດຖະໜາ
ໃຫ້ຄວາມຜິດກ່ຽວກັບຄວາມຕາຍຂອງຜູ້ນັ້ນ[ກ] ຕົກໃສ່ພວກເຮົາ." 29ຝ່າຍເປໂຕກັບອັກຄະສາ-
ວົກອື່ນໆ ຕອບວ່າ, "ພວກຂ້ານ້ອຍຈຳຕ້ອງເຊື່ອຟັງພຣະເຈົ້າຫລາຍກວ່າເຊື່ອຟັງມະນຸດ.
30ພຣະເຢຊູຊຶ່ງທ່ານທັງຫລາຍໄດ້ຂ້າເສຍໂດຍແຂວນໄວ້ທີ່ຕົ້ນໄມ້ນັ້ນ ພຣະເຈົ້າແຫ່ງບັນພະບຸ-
ລຸດຂອງເຮົາໄດ້ຊົງບັນດານໃຫ້ເປັນຄືນມາໃໝ່. 31ພຣະອົງນັ້ນແຫລະ, ພຣະເຈົ້າໄດ້ຊົງຍົກຕັ້ງ
ໄວ້ທີ່ກ້ຳພຣະຫັດຂວາຂອງພຣະອົງ ໃຫ້ເປັນອົງພຣະຜູ້ນຳແລະອົງພຣະຜູ້ໂຜດໃຫ້ພົ້ນ ເພື່ອຈະ
ໃຫ້ຊົນຊາດອິສຣາເອນກັບໃຈໃໝ່ ແລ້ວຈະຊົງໂຜດຍົກຄວາມຜິດບາບຂອງເຂົາ. 32ເຮົາທັງ-
ຫລາຍຈຶ່ງເປັນພະຍານເຖິງເລື່ອງເຫລົ່ານີ້ ແລະພຣະວິນຍານບໍລິສຸດຊຶ່ງພຣະເຈົ້າໄດ້ປະທານ
ໃຫ້ທຸກຄົນທີ່ເຊື່ອຟັງພຣະອົງນັ້ນ ກໍຊົງເປັນພະຍານເໝືອນກັນ."
33ເມື່ອທີ່ປະຊຸມໄດ້ຍິນດັ່ງນັ້ນກໍພາກັນເຈັບແຄ້ນແໜ້ນໃຈຄຶດຢາກຂ້າເຂົາເສຍ. 34ແຕ່ມີຟາຣີ-
ຊາຍຜູ້ໜຶ່ງຊື່ຄາມາລີເອັນ ເປັນຄູບາອາຈານທີ່ນັບຖືຂອງພົນລະເມືອງທັງໝົດ ໄດ້ຢືນຂຶ້ນໃນທີ່
ປະຊຸມ ແລ້ວສັ່ງໃຫ້ພາພວກອັກຄະສາວົກອອກໄປຈັກໜ້ອຍໜຶ່ງ. 35ທ່ານຈຶ່ງໄດ້ກ່າວແກ່ທີ່ປະ-
ຊຸມວ່າ, "ຊາວອິສຣາເອນເອີຍ, ຈົ່ງລະວັງຕົວໃຫ້ດີໃນສິ່ງທີ່ພວກທ່ານກຳລັງຈະເຮັດແກ່ຄົນ
ເຫລົ່ານີ້. 36ເມື່ອຄາວກ່ອນມີຄົນໜຶ່ງຊື່ທູດາໄດ້ລຸກຂຶ້ນອວດວ່າຕົວເປັນຜູ້ສຳຄັນ ມີຄົນທີ່ຕິດຕາມ
ຮ່ວມໄປປະມານສີ່ຮ້ອຍຄົນ ແຕ່ທູດານັ້ນໄດ້ຖືກຂ້າເສຍ ແລະພັກພວກເຫລົ່ານັ້ນກໍກະຈັດກະ-
ຈາຍສູນຫາຍໄປ. 37ພາຍຫລັງຜູ້ນີ້ມີອີກຄົນໜຶ່ງຊື່ຢູດາ ເປັນໄທຄາລີເລ ໄດ້ປະກົດຂຶ້ນໃນຄາວ
ຈົດບັນຊີສຳມະໂນຄົວ ແລະໄດ້ຊັກຈູງພົນລະເມືອງໃຫ້ຕິດຕາມຕົວໄປ ຄົນຜູ້ນັ້ນກໍຈິບຫາຍໄປ
ເໝືອນກັນ ແລະຄົນທັງປວງທີ່ເຊື່ອຟັງຜູ້ນັ້ນກໍກະຈັດກະຈາຍໄປ. 38ໃນເລື່ອງນີ້ຂ້າພະເຈົ້າຈຶ່ງ
ບອກທ່ານທັງຫລາຍວ່າ ຢ່າກ່ຽວກັບຄົນພວກນີ້ເທາະ ປ່ອຍເຂົາເສຍ ເພາະວ່າຖ້າແຜນການຫລື
ກິດຈະການນີ້ມາຈາກມະນຸດ ມັນກໍຈະເສື່ອມສູນໄປເອງ. 39ແຕ່ຖ້າມາຈາກພຣະເຈົ້າທ່ານທັງ-
ຫລາຍຈະບໍ່ສາມາດທຳລາຍເຂົາໄດ້ ຢ້ານວ່າພວກທ່ານຈະກັບເປັນຜູ້ສູ້ຮົບຕໍ່ພຣະເຈົ້າ." 40ແລ້ວ
ເຂົາກໍຍອມຟັງຄາມາລີເອັນ, ແລະເມື່ອໄດ້ເອີ້ນພວກອັກຄະສາວົກເຂົ້າມາແລ້ວ ຈຶ່ງຂ້ຽນແລະສັ່ງ
ຫ້າມບໍ່ໃຫ້ອອກພຣະນາມຂອງພຣະເຢຊູ ແລ້ວກໍປ່ອຍໄປ. 41ພວກອັກຄະສາວົກຈຶ່ງອອກໄປ
ຈາກທີ່ປະຊຸມດ້ວຍຄວາມຍິນດີ ທີ່ຊົງຖືວ່າຕົນສົມຄວນໄດ້ຖືກປະໝາດນິນທາເພາະເຫັນແກ່
ພຣະນາມນັ້ນ. 42ແລະທຸກໆ ວັນໃນບໍລິເວນພຣະວິຫານແລະຕາມບ້ານເຮືອນ ພວກອັກຄະສາ-
ວົກໄດ້ສັ່ງສອນແລະປະກາດຂ່າວປະເສີດບໍ່ໄດ້ຂາດ ວ່າພຣະເຢຊູຊົງເປັນພຣະຄຣິດ.

[ກ]ພາສາເດີມວ່າ "ໃຫ້ເລືອດຂອງຜູ້ນັ້ນ..."

# ບົດທີ 6

## ການເລືອກຕັ້ງຄະນະເຈັດຄົນ

1ໃນຄາວນັ້ນ ເມື່ອຈຳນວນພວກສິດກຳລັງທະວີຫລາຍຂຶ້ນ ພວກທີ່ປາກພາສາ ກຣີກ ໄດ້ຈົ່ມຕໍ່
ພວກທີ່ປາກພາສາ ເຮັບເຣີວ່າ ໃນການແຈກທານທຸກໆ ວັນນັ້ນ ເຂົາເວັ້ນບໍ່ໄດ້ແຈກໃຫ້ພວກ
ແມ່ໝ້າຍຊາວ ກຣີກ. 2ຝ່າຍອັກຄະສາວົກສິບສອງຄົນ ຈຶ່ງເອີ້ນບັນດາພວກສິດໃຫ້ປະຊຸມກັນ
ແລ້ວກ່າວວ່າ, “ຊຶ່ງພວກເຮົາຈະປະພຣະທຳຂອງ ພຣະເຈົ້າ ໄປ ເພື່ອໄປຮັບໃຊ້ການກິນການດື່ມ
ກໍບໍ່ສົມຄວນ. 3ເຫດສັນນີ້ພີ່ນ້ອງທັງຫລາຍເອີຍ, ຈົ່ງຊອກຫາເຈັດຄົນໃນຖ້າມກາງພວກທ່ານທີ່ມີ
ຊື່ສຽງດີຜູ້ເຕັມໄປດ້ວຍ ພຣະວິນຍານບໍລິສຸດ ແລະສະຕິປັນຍາ ເຮົາຈະຕັ້ງເຂົາໃຫ້ດູແລການງານ
ນີ້. 4ສ່ວນພວກເຮົາກໍຈະເອົາໃຈໃສ່ໃນການອ້ອນວອນແລະການສັ່ງສອນພຣະທຳ.” 5ຄົນທັງໝົດ
ໄດ້ມີຄວາມເຫັນຊອບກັບຄຳສະເໜີນີ້ ຈຶ່ງເລືອກເອົາຊະເຕຟາໂນ ຜູ້ເຕັມໄປດ້ວຍຄວາມເຊື່ອ
ແລະພຣະວິນຍານບໍລິສຸດ ກັບ ຟີລິບ, ໂປຣໂຄໂຣ, ນີກາໂນ, ຕີໂມນ, ປາເມນາ, ແລະ ນີໂກ-
ລາໂອ ໄທເມືອງອັນຕີໂອເຂຍຜູ້ເຂົ້າຝ່າຍສາດສະໜາຢິວ. 6ຄົນທັງເຈັດນີ້ເຂົາໄດ້ນຳມາສະເໜີຕໍ່
ພວກອັກຄະສາວົກ ເມື່ອພວກອັກຄະສາວົກໄດ້ອ້ອນວອນແລ້ວກໍວາງມືໃສ່ເຂົາ. 7ພຣະທຳຂອງ
ພຣະເຈົ້າ ໄດ້ຈະເລີນຂຶ້ນ ແລະຈຳນວນພວກສິດກໍທະວີຫລາຍຂຶ້ນໃນກຸງ ເຢຣູຊາເລັມ ແລະມີ
ພວກປະໂລຫິດຈຳນວນຫລາຍໄດ້ຍອມເຊື່ອໃນພຣະສາດສະໜາເໝືອນກັນ.

## ຊະເຕຟາໂນຖືກຈັບ

8ຝ່າຍຊະເຕຟາໂນ ເຕັມໄປດ້ວຍພຣະຄຸນແລະລິດເດດ ຈຶ່ງເຮັດການອັດສະຈັນແລະໝາຍສຳ-
ຄັນອັນໃຫຍ່ຖ້າມກາງພົນລະເມືອງ. 9ແຕ່ມີບາງຄົນມາຈາກໂຮງທຳມະເທດສະໜາທີ່ເອີ້ນວ່າ,
“ໂຮງທຳທາດອິດສະຫລະ” ມີທັງຊາວ ກີເຣເນ, ຊາວອາເລັກຊັນເດຍ, ກັບບາງຄົນຈາກ ກີລີ-
ເກຍ ແລະ ອາເຊຍ ໄດ້ລຸກຂຶ້ນພາກັນມາໄລ່ລຽງກັບຊະເຕຟາໂນ. 10ຄົນເຫລົ່ານັ້ນຕໍ່ສູ້ກັບຄຳທີ່
ທ່ານກ່າວດ້ວຍສະຕິປັນຍາ ແລະດ້ວຍ ພຣະວິນຍານ ບໍ່ໄດ້. 11ເຂົາຈຶ່ງຍົວະຍົງເອົາຊາຍບາງຄົນ
ມາກ່າວຫາວ່າ, “ເຮົາໄດ້ຍິນຄົນຜູ້ນີ້ກ່າວຄຳຫຍາບຊ້າຕໍ່ ໂມເຊ ແລະຕໍ່ ພຣະເຈົ້າ.” 12ສັນນັ້ນເຂົາ
ໄດ້ຍົວະຍົງພົນລະເມືອງກັບພວກເຖົ້າແກ່ແລະພວກນັກທຳ ແລ້ວໂດດຈັບຊະເຕຟາໂນນຳໄປຫາ
ສານສູງສຸດ. 13ໃຫ້ພະຍານບໍ່ຈິງມາກ່າວວ່າ, “ຄົນຜູ້ນີ້ບໍ່ໄດ້ເຊົາໃນການກ່າວຕໍ່ສູ້ບ່ອນສັກສິດນີ້
ແລະຕໍ່ສູ້ພຣະບັນຍັດ. 14ເພາະໝູ່ເຮົາໄດ້ຍິນຄົນນີ້ເວົ້າວ່າ ເຢຊູ ໄທ ນາຊາເຣັດ ນັ້ນແຫລະ, ຈະ
ທຳລາຍສະຖານທີ່ນີ້ ແລະຈະປ່ຽນທຳນຽມທີ່ ໂມເຊ ໃຫ້ໄວ້ແກ່ພວກເຮົາ.” 15ແລະບັນດາຄົນທີ່ນັ່ງ
ຢູ່ທີ່ປະຊຸມໄດ້ແນມເບິ່ງຊະເຕຟາໂນ ກໍເຫັນວ່າໜ້າຂອງທ່ານຄືໜ້າເທວະດາ.

# ບົດທີ 7

## ຊະເຕຟາໂນກ່າແກ້ຕົວ

1ແລ້ວມະຫາປະໂລຫິດຈຶ່ງຖາມວ່າ, “ການນີ້ມີດັ່ງນັ້ນແທ້ຫລື.” 2ຝ່າຍ ຊະເຕຟາໂນ ໄດ້ຕອບ
ວ່າ, “ພີ່ນ້ອງແລະຍາພໍ່ທັງຫລາຍເອີຍ, ຈົ່ງຟັງເອົາເທີນ ພຣະເຈົ້າຜູ້ຊົງສະຫງ່າລາສີ ໄດ້ຊົງປະ-
ກົດ ແກ່ ອັບຣາຮາມ ບັນພະບຸລຸດຂອງພວກເຮົາແລ້ວ ເມື່ອເພິ່ນຍັງຢູ່ໃນປະເທດ ໂມເຊ ໂປຕາເມຍ

ກ່ອນທີ່ໄປອາໃສຢູ່ໃນເມືອງ ຮາຣານ, ໂດຍຊົງກ່າວກັບທ່ານວ່າ, [3]‘ເຈົ້າຈົ່ງອອກຈາກເມືອງແລະ
ຍາດພີ່ນ້ອງຂອງເຈົ້າໄປຍັງແຜ່ນດິນທີ່ເຮົາຈະສະແດງໃຫ້ເຈົ້າ.’ [4]ອັບຣາຮາມ ຈຶ່ງອອກຈາກແຜ່ນ-
ດິນຂອງຊາວ ຄັນເດອາ ໄປອາໃສຢູ່ທີ່ເມືອງ ຮາຣານ ຫລັງຈາກທີ່ບິດາຂອງທ່ານສິ້ນຊີວິດແລ້ວ
ພຣະອົງຊົງໃຫ້ທ່ານອອກຈາກທີ່ນັ້ນມາຢູ່ໃນແຜ່ນດິນທີ່ພວກທ່ານອາໃສຢູ່ທຸກວັນນີ້. [5]ແຕ່ພຣະ-
ອົງບໍ່ໄດ້ຊົງໂຜດໃຫ້ທ່ານມີມໍລະດົກໃນແຜ່ນດິນນີ້ແມ່ນແຕ່ທີ່ຮອຍຕີນ ແຕ່ຂະນະເມື່ອທ່ານຍັງບໍ່ມີ
ລູກ ພຣະອົງຊົງສັນຍາໄວ້ວ່າ ຈະປະທານແຜ່ນດິນນີ້ໃຫ້ເປັນກຳມະສິດແກ່ທ່ານ ແລະແກ່ເຊື້ອ-
ສາຍຂອງທ່ານດ້ວຍ. [6]ພຣະເຈົ້າ ໄດ້ຊົງກ່າວໄວ້ດັ່ງນີ້ ເຊື້ອສາຍຂອງທ່ານຈະໄປອາໃສເປັນແຂກ
ຢູ່ໃນຕ່າງປະເທດແລະຊາວປະເທດນັ້ນຈະເອົາເຂົາເປັນຂ້ອຍຂ້າ ແລະຈະຂົ່ມເຫງເຂົາເປັນເວລາ
ສີ່ຮ້ອຍປີ. [7]ແລ້ວພຣະອົງຊົງກ່າວອີກວ່າ, ‘ຝ່າຍເຮົາຈະພິພາກສາລົງໂທດປະເທດທີ່ເຂົາຮັບໃຊ້
ເປັນຂ້ອຍຂ້າຢູ່ນັ້ນ ຫລັງຈາກນັ້ນແລ້ວເຂົາຈະອອກມາບົວລະບັດຂາບໄຫວ້ເຮົາໃນທີ່ນີ້.’ [8]ພຣະ-
ເຈົ້າ ຈຶ່ງຊົງປະທານຄຳສັນຍາອັນກ່ຽວກັບພິທີຕັດໃຫ້ແກ່ ອັບຣາຮາມ ດັ່ງນັ້ນ ເມື່ອ ອັບຣາຮາມ ມີ
ລູກຊື່ ອີຊາກ ຈຶ່ງໃຫ້ຮັບພິທີຕັດໃນວັນຖ້ວນແປດຝ່າຍ ອີຊາກ ກໍໃຫ້ ຢາໂຄບ ຮັບພິທີຕັດ ແລະ ຢາ-
ໂຄບ ກໍໃຫ້ບັນພະບຸລຸດສິບສອງຄົນນັ້ນຮັບພິທີຕັດເໝືອນກັນ. [9]“ອັນໜຶ່ງ, ບັນພະບຸລຸດເຫລົ່ານັ້ນ
ຄຶດອິດສາ ໂຢເຊັບ ຈຶ່ງຂາຍເພິ່ນໄປຍັງປະເທດ ເອຢິບ ແຕ່ຝ່າຍ ພຣະເຈົ້າ ຊົງສະຖິດຢູ່ນຳເພິ່ນ.
[10]ຊົງໂຜດຊ່ອຍໃຫ້ພົ້ນຈາກຄວາມທຸກລຳບາກທັງສິ້ນ ຊົງໂຜດໃຫ້ມີຄວາມຊອບແລະສະຕິປັນຍາ
ຕໍ່ພຣະພັກ ຟາຣາໂອ ກະສັດຂອງປະເທດ ເອຢິບ ກະສັດຈຶ່ງຊົງຕັ້ງ ໂຢເຊັບ ເປັນຜູ້ຄອບຄອງປະ-
ເທດ ເອຢິບ ກັບທັງພະລາຊະວັງ. [11]ຕໍ່ມາເລີຍເກີດມີການອຶດເຂົ້າປາອາຫານທົ່ວປະເທດ ເອຢິບ
ແລະປະເທດ ການາອານ ແລະມີຄວາມທຸກລຳບາກຢ່າງໃຫຍ່ຫລວງ ບັນພະບຸລຸດຂອງພວກເຮົາ
ຈຶ່ງຫາອາຫານມາລ້ຽງຊີບບໍ່ໄດ້. [12]ຝ່າຍ ຢາໂຄບ ເມື່ອໄດ້ຍິນຂ່າວວ່າມີເຂົ້າຢູ່ໃນປະເທດ ເອຢິບ ຈຶ່ງ
ໃຊ້ບັນພະບຸລຸດຂອງພວກເຮົາໄປທີ່ນັ້ນເປັນເທື່ອທຳອິດ. [13]ເທື່ອທີສອງ ໂຢເຊັບ ໄດ້ສະແດງຕົວ
ໃຫ້ອ້າຍນ້ອງຮູ້ຈັກ ແລະໄດ້ແຈ້ງໃຫ້ ຟາຣາໂອ ຮູ້ຈັກຍາດວົງຂອງເພິ່ນເໝືອນກັນ. [14]ຝ່າຍ ໂຢ-
ເຊັບ ໄດ້ໃຊ້ຄົນໄປເຊີນ ຢາໂຄບ ຜູ້ເປັນບິດາ ກັບບັນດາຍາດພີ່ນ້ອງຂອງເພິ່ນເຈັດສິບຫ້າຄົນໃຫ້
ມາຫາ. [15]ຢາໂຄບ ໄດ້ລົງໄປຍັງປະເທດ ເອຢິບ ແລ້ວທ່ານກັບພວກບັນພະບຸລຸດຂອງເຮົາໄດ້
ຕາຍໄປ. [16]ເຂົາໄດ້ນຳເອົາສົບມາເຖິງເມືອງ ເຊເຄັມ ຈຶ່ງມ້ຽນໄວ້ໃນອຸບໂມງທີ່ ອັບຣາຮາມ ເອົາ
ເງິນຈຳນວນໜຶ່ງຊື້ຈາກຕະກຸນ ຮາໂມ ໃນເມືອງ ເຊເຄັມ.

[17]“ອັນໜຶ່ງ, ເມື່ອກຳນົດແຫ່ງພຣະສັນຍາ ຊຶ່ງ ພຣະເຈົ້າ ໄດ້ຊົງກ່າວໄວ້ກັບ ອັບຣາຮາມ ໃກ້ຈະ
ມາເຖິງແລ້ວ ຊົນຊາດ ອິສຣາເອນ ໃນປະເທດ ເອຢິບ ໄດ້ເພີ່ມທະວີຫລາຍຂຶ້ນ. [18]ຈົນເຖິງກະສັດ
ອີກອົງໜຶ່ງຊຶ່ງບໍ່ຮູ້ຈັກ ໂຢເຊັບ ຂຶ້ນສະເຫວີຍລາດໃນປະເທດ ເອຢິບ. [19]ກະສັດອົງນີ້ໄດ້ໃຊ້ກົນອຸ-
ບາຍຂົ່ມເຫງເຊື້ອສາຍແລະບັນພະບຸລຸດຂອງພວກເຮົາ ໂດຍບັງຄັບໃຫ້ເອົາລູກອ່ອນໄປຖິ້ມເສຍ
ເພື່ອບໍ່ໃຫ້ມີຊີວິດເຫລືອຢູ່ໄດ້. [20]ໃນຄາວນັ້ນ ໂມເຊ ໄດ້ເກີດມາມີຮູບຮ່າງງົດງາມປານ ພຣະເຈົ້າ[ກ]
ເຂົາຈຶ່ງລ້ຽງໄວ້ໃນເຮືອນພໍ່ລະຫວ່າງສາມເດືອນ. [21]ເມື່ອເຂົາໄດ້ເອົາເດັກນ້ອຍນັ້ນໄປຖິ້ມນອກ
ເຮືອນ ລາຊະທິດາຂອງ ຟາຣາໂອ ໄດ້ຮັບເອົາໄປລ້ຽງໄວ້ເປັນລູກຂອງຕົນ. [22]ຝ່າຍ ໂມເຊ ຈຶ່ງໄດ້

[ກ]ຫລືວ່າ “ງົດງາມຕໍ່ພຣະພັກພຣະເຈົ້າ.”

ຮັບການສອນໃນວິຊາການທຸກຢ່າງຂອງຊາວ ເອຢິບ ມີຄວາມສາມາດໃນການກ່າວແລະໃນກິດ-
ຈະການຕ່າງໆ. [23]“ແຕ່ເມື່ອ ໂມເຊ ມີອາຍຸໄດ້ສີ່ສິບປີ ກໍຄິດຢາກໄປຢ້ຽມຢາມພວກພີ່ນ້ອງຂອງຕົນ
ຄືຊົນຊາດ ອິສຣາເອນ. [24]ແລະ ເມື່ອທ່ານໄດ້ເຫັນຜູ້ໜຶ່ງໃນພວກພີ່ນ້ອງຖືກຂົ່ມເຫງກໍເຂົ້າໄປກັ້ນ
ກາງເອົາໄວ້ ຈຶ່ງຂ້າຊາວ ເອຢິບ ຜູ້ຂົ່ມເຫງນັ້ນເສຍເພື່ອເປັນການແກ້ແຄ້ນ. [25]ທ່ານໄດ້ຄຶດວ່າຍາດ
ພີ່ນ້ອງຄົງຈະເຂົ້າໃຈວ່າ ພຣະເຈົ້າ ຈະຊົງໂຜດໃຫ້ເຂົາລອດພົ້ນດ້ວຍມືຂອງຕົນ ແຕ່ເຂົາບໍ່ໄດ້
ເຂົ້າໃຈດັ່ງນັ້ນ. [26]ໃນວັນໜ້ານັ້ນ ໂມເຊ ໄດ້ອອກໄປພົບເຂົາກຳລັງວິວາດກັນຢູ່ ກໍພະຍາຍາມໃຫ້
ເຂົາຄືນດີກັນ ຈຶ່ງບອກເຂົາວ່າ ‘ຊາຍເອີຍ, ໝູ່ເຈົ້າເປັນພີ່ນ້ອງກັນ ເປັນຫຍັງຈຶ່ງເຮັດຮ້າຍຕໍ່ກັນ.’
[27]ຝ່າຍຄົນທີ່ກຳລັງເຮັດຮ້າຍຕໍ່ເພື່ອນບ້ານຂອງຕົນນັ້ນໄດ້ຊຸກ ໂມເຊ ອອກ ແລະກ່າວວ່າ ‘ໃຜໄດ້
ຕັ້ງເຈົ້າໃຫ້ເປັນຜູ້ປົກຄອງແລະຕັດສິນພວກເຮົາ. [28]ບໍ່ແມ່ນເຈົ້າຢາກຂ້ານ້ອຍເໝືອນຂ້າຊາວ ເອ-
ຢິບ ມື້ວານນີ້ຫລື.’ [29]ເມື່ອ ໂມເຊ ໄດ້ຍິນຄຳນັ້ນຈຶ່ງປົບໜີໄປອາໃສເປັນຄົນຕ່າງດ້າວຢູ່ໃນປະເທດ
ມີດີອານ ແລະທີ່ນັ້ນທ່ານມີລູກຊາຍສອງຄົນ.

[30]“ຄັນລ່ວງໄປໄດ້ສີ່ສິບປີແລ້ວ ມີເທວະດາອົງໜຶ່ງໄດ້ມາປະກົດແກ່ທ່ານໃນແປວໄຟທີ່ພຸ່ມ
ໜາມໃນປ່າຊີນາຍ. [31]ເມື່ອ ໂມເຊ ໄດ້ເຫັນກໍປະຫລາດໃຈດ້ວຍເລື່ອງນິມິດນັ້ນເມື່ອກຳລັງເຂົ້າໄປ
ເບິ່ງໃກ້ໆ ກໍມີພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ຊົງກ່າວວ່າ, [32]‘ຝ່າຍເຮົາເປັນ ພຣະເຈົ້າ ແຫ່ງ
ຂອງບັນພະບຸລຸດຂອງເຈົ້າ ຄື ພຣະເຈົ້າ ຂອງ ອັບຣາຮາມ, ຂອງ ອີຊາກ, ແລະຂອງ ຢາໂຄບ’
ໂມເຊ ຈຶ່ງຢ້ານຈົນຕົວສັ່ນ ບໍ່ກ້າຫລຽວເບິ່ງ. [33]ອົງ ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ ໂມເຊ ວ່າ, ‘ຈົ່ງຖອດ
ເກີບອອກເສຍ ເພາະບ່ອນທີ່ເຈົ້າຢືນຢູ່ນີ້ເປັນບ່ອນສັກສິດ. [34]ແທ້ຈິງເຮົາໄດ້ເຫັນຄວາມທຸກລຳ-
ບາກແຫ່ງພົນລະເມືອງຂອງເຮົາທີ່ຢູ່ໃນປະເທດ ເອຢິບ ແລະເຮົາໄດ້ຍິນສຽງໂອ່ຍຄາງຂອງເຂົາ
ແລ້ວ ເຮົາຈຶ່ງລົງມາເພື່ອຈະຊ່ອຍເຂົາໃຫ້ພົ້ນ ບັດນີ້ມາແມ ເຮົາຈະໃຊ້ເຈົ້າໄປຍັງປະເທດ ເອຢິບ.’
[35]“ໂມເຊ ຜູ້ນີ້ແຫລະ, ທີ່ຖືກເຂົາປະຕິເສດໂດຍກ່າວວ່າ ‘ແມ່ນໃຜໄດ້ຕັ້ງເຈົ້າໃຫ້ເປັນຜູ້ປົກຄອງ
ແລະຜູ້ຕັດສິນພວກເຮົາ’ ແມ່ນທ່ານຜູ້ນີ້ທີ່ ພຣະເຈົ້າ ໄດ້ຊົງໃຊ້ໄປເປັນທັງຜູ້ປົກຄອງເປັນຜູ້ຊ່ອຍ
ໃຫ້ພົ້ນ ໂດຍມືຂອງເທວະດາອົງທີ່ໄດ້ມາປະກົດແກ່ທ່ານທີ່ພຸ່ມໜາມນັ້ນ. [36]ແມ່ນ ໂມເຊ ຜູ້ນີ້ເປັນ
ຜູ້ນຳເອົາພວກ ອິສຣາເອນ ອອກມາ ໂດຍເຮັດການອັດສະຈັນແລະໝາຍສຳຄັນໃນປະເທດ ເອ-
ຢິບ, ທີ່ທະເລແດງ, ແລະໃນປ່າລະຫວ່າງສີ່ສິບປີ. [37]ແມ່ນທ່ານຜູ້ນີ້ແຫລະ, ທີ່ໄດ້ກ່າວຕໍ່ຊົນ
ຊາດ ອິສຣາເອນ ວ່າ, ‘ພຣະເຈົ້າ ຈະຊົງປະທານຜູ້ປະກາດພຣະທຳຜູ້ໜຶ່ງໃຫ້ເກີດມາເພື່ອທ່ານ
ຈາກພວກພີ່ນ້ອງຂອງທ່ານ ເໝືອນຢ່າງທີ່ໄດ້ຊົງໃຫ້ຂ້າພະເຈົ້າເກີດມາ.’”[ກ] [38]ແມ່ນ ໂມເຊ ຜູ້ນີ້
ແຫລະ, ທີ່ຮ່ວມຢູ່ໃນຊຸມນຸມຊົນໃນປ່າພ້ອມກັບເທວະດາຕົນນັ້ນ ຊຶ່ງໄດ້ເວົ້າກັບທ່ານຢູ່ພູຊີນາຍ
ແລະຢູ່ກັບບັນພະບຸລຸດຂອງພວກເຮົາ ທີ່ໄດ້ຮັບພຣະທຳອັນມີຊີວິດຖາວອນມາໃຫ້ແກ່ພວກເຮົາ.
[39]ແຕ່ບັນພະບຸລຸດຂອງພວກເຮົາບໍ່ມີໃຈເຊື່ອຟັງທ່ານຜູ້ນີ້ ແຕ່ໄດ້ປັດຊຸກທ່ານອອກເສຍ ເພາະ
ເຂົາມີໃຈປາດຖະໜາຈະກັບໄປຍັງປະເທດ ເອຢິບ. [40]ເຂົາຈຶ່ງກ່າວກັບ ອາໂຣນ ວ່າ ‘ຂໍຈົ່ງສ້າງ
ພຣະໃຫ້ພວກຂ້າພະເຈົ້າ ເພື່ອຈະນຳໜ້າພວກຂ້າພະເຈົ້າໄປ ສ່ວນ ໂມເຊ ຜູ້ນີ້ ທີ່ໄດ້ນຳພວກຂ້າ-
ພະເຈົ້າ ອອກ ຈາກ ປະເທດ ເອຢິບ ພວກ ຂ້າພະເຈົ້າ ບໍ່ ຮູ້ ວ່າ ມີ ເຫດ ໃດ ໄດ້ ບັງເກີດ ແກ່ ເພິ່ນ ແລ້ວ.’

---

[ກ]ຫລືວ່າ “ເໝືອນດັ່ງຂ້າພະເຈົ້າ.”

41ໃນຄາວນັ້ນເຂົາໄດ້ສ້າງຮູບງົວນ້ອຍຕົວໜຶ່ງຂຶ້ນ ແລະໄດ້ເອົາເຄື່ອງບູຊາມາຖວາຍແກ່ຮູບນັ້ນ
ແລະເຂົາໄດ້ຈັດພິທີມ່ວນຊື່ນສະຫລອງສິ່ງທີ່ສ້າງຂຶ້ນດ້ວຍມືຂອງຕົນເອງນັ້ນ. 42ແຕ່ພຣະເຈົ້າໄດ້
ຊົງຫັນພຣະພັກໄປເສຍ ແລະປະໃຫ້ເຂົາບົວລະບັດຂາບໄຫວ້ຝູງກອງທັບໃນທ້ອງຟ້າ ຕາມທີ່ມີ
ຄຳຂຽນໄວ້ໃນພຣະຄຳພີຂອງຜູ້ປະກາດພຣະທຳວ່າ 'ຍາດວົງ ອິສຣາເອນ ເອີຍ, ສັດທີ່ຈະຂ້າ
ຖວາຍ ແລະ ເຄື່ອງບູຊານັ້ນ ພວກເຈົ້າບໍ່ໄດ້ເອົາມາຖວາຍແກ່ເຮົາໃນປ່າລະຫວ່າງສີ່ສິບປີຕີ້.
43ພວກເຈົ້າໄດ້ຂົນເອົາສຳນັກຜ້າຂອງພະ ໂມລົກ ແລະດວງດາວຂອງພະ ເຣຟານ ຄືຮູບທີ່ພວກ
ເຈົ້າສ້າງຂຶ້ນເພື່ອນະມັດສະການຂາບໄຫວ້ ເຮົາຈຶ່ງຈະກວາດພວກເຈົ້າໃຫ້ກາຍເມືອງ ບາບີໂລນ
ໄປພຸ້ນ.' 44"ບັນພະບຸລຸດຂອງພວກເຮົາເມື່ອຢູ່ໃນປ່າ ກໍມີສຳນັກແຫ່ງຄຳພະຍານທີ່ເຮັດດ້ວຍຜ້າ
ຕາມທີ່ພຣະອົງຊົງບັນຍັດໄວ້ ເມື່ອຊົງກ່າວກັບ ໂມເຊ ໃຫ້ສ້າງຕາມແບບຢ່າງທີ່ທ່ານໄດ້ເຫັນ.
45ຝ່າຍບັນພະບຸລຸດຂອງພວກເຮົາເມື່ອໄດ້ຮັບສຳນັກນັ້ນຈຶ່ງຂົນຕາມ ໂຢຊວຍ ໄປ ເມື່ອໄດ້ເຂົ້າຍຶດ
ເອົາແຜ່ນດິນຂອງບັນປະຊາຊາດ ຊຶ່ງ ພຣະເຈົ້າ ໄດ້ຊົງຂັບໄລ່ໃຫ້ໜີໄປຕໍ່ໜ້າບັນພະບຸລຸດຂອງ
ພວກເຮົາ ສຳນັກນັ້ນກໍມີສືບມາຈົນເຖິງສະໄໝຂອງກະສັດ ດາວິດ. 46ຄືຜູ້ທີ່ຊອບຕໍ່ພຣະພັກ
ພຣະເຈົ້າ ໄດ້ທູນຂໍອະນຸຍາດຊອກຫາພຣະວິຫານ[ກ] ສຳລັບເຊື້ອສາຍ[ຂ] ຂອງຢາໂຄບ. 47ແຕ່
ວ່າແມ່ນກະສັດ ໄຊໂລໂມນ ເປັນຜູ້ຊົງສ້າງພຣະວິຫານສຳລັບພຣະອົງ. 48ເຖິງປານນັ້ນອົງຜູ້ສູງສຸດ
ກໍບໍ່ໄດ້ປະທັບໃນບ່ອນທີ່ສ້າງຂຶ້ນດ້ວຍມະນຸດ ຕາມທີ່ຜູ້ປະກາດພຣະທຳໄດ້ກ່າວໄວ້ວ່າ.

49 'ຟ້າສະຫວັນເປັນບັນລັງຂອງເຮົາ
ແລະແຜ່ນດິນໂລກເປັນທີ່ຮອງຕີນຂອງເຮົາ'
ອົງ ພຣະຜູ້ເປັນເຈົ້າ ຊົງຖາມວ່າ
'ເຈົ້າທັງຫລາຍຈະສ້າງທີ່ສະຖິດຢ່າງໃດສຳລັບເຮົາ
ຫລືບ່ອນໃດເປັນທີ່ພັກອາໄສຂອງເຮົາ.
50 ສິ່ງເຫລົ່ານີ້ມືຂອງເຮົາໄດ້ສ້າງໄວ້ທັງສິ້ນ.
ບໍ່ແມ່ນຫລື'

51"ໂອ ຄົນຊາດຄໍແຂງເອີຍ, ທີ່ບໍ່ໄດ້ຮັບພິທີຕັດໃນໃຈແລະໃນຫູ ທ່ານທັງຫລາຍຂັດຂວາງ
ພຣະວິນຍານບໍລິສຸດຢູ່ສະເໝີ ບັນພະບຸລຸດຂອງພວກທ່ານເປັນຢ່າງໃດ ທ່ານທັງຫລາຍກໍເປັນ
ຢ່າງນັ້ນເໝືອນກັນ. 52ມີໃຜແດ່ໃນບັນດາຜູ້ປະກາດພຣະທຳທີ່ບັນພະບຸລຸດຂອງພວກທ່ານບໍ່ໄດ້
ຂົ່ມເຫງ ເຂົາໄດ້ຂ້າບັນດາຜູ້ປະກາດລ່ວງໜ້າເຖິງເລື່ອງການສະເດັດມາຂອງອົງຜູ້ຊອບທຳ ບັດ
ນີ້ທ່ານທັງຫລາຍໄດ້ເກີດເປັນຜູ້ມອບພຣະອົງໄວ້ແລະຂ້າເສຍ. 53ຄືທ່ານທັງຫລາຍຜູ້ທີ່ໄດ້ຮັບ
ພຣະບັນຍັດຈາກພວກເທວະດາ ແຕ່ບໍ່ໄດ້ຖືຮັກສາພຣະບັນຍັດນັ້ນ."

## ການຄວ່າງຫີນໃສ່ຊະເຕຟາໂນໃຫ້ຕາຍ

54ເມື່ອເຂົາທັງຫລາຍກຳລັງໄດ້ຍິນດັ່ງນັ້ນ ເຂົາກໍເຈັບແຄ້ນແໜ້ນໃຈ ແລ້ວຕັ້ງຕົ້ນຂົບແຂ້ວ
ຄ້ຽວຟັນໃສ່ ຊະເຕຟາໂນ. 55ຝ່າຍ ຊະເຕຟາໂນ ເຕັມໄປດ້ວຍ ພຣະວິນຍານບໍລິສຸດ ໄດ້ເງີຍໜ້າ

[ກ]ພາສາເດີມວ່າ "ທີ່ສະຖິດ" [ຂ]ຄືວ່າລູກຫລານຂອງຢາໂຄບ ສຳເນົາຕົ້ນສະບັບບາງສະບັບມີຄຳວ່າ
"ພຣະເຈົ້າ" ແທນຄຳວ່າ "ເຊື້ອສາຍ".

ຂຶ້ນເພ່ງເບິ່ງສະຫວັນ ຈຶ່ງເຫັນພຣະລັດໝີຂອງ ພຣະເຈົ້າ ແລະເຫັນ ພຣະເຢຊູ ຊົງຢືນຢູ່ກ້ຳຂວາ
ພຣະຫັດຂອງພຣະອົງ. 56ແລ້ວທ່ານໄດ້ເວົ້າວ່າ, “ເບິ່ງແມ, ຂ້າພະເຈົ້າເຫັນທ້ອງຟ້າແຫວກອອກ
ແລະເຫັນບຸດມະນຸດຊົງຢືນຢູ່ກ້ຳຂວາພຣະຫັດຂອງ ພຣະເຈົ້າ.” 57ແຕ່ເຂົາໄດ້ຮ້ອງສຽງດັງຂຶ້ນອັດ
ຫູຕົນເສຍ ພາກັນຫລູບໃສ່ຊະເຕຟາໂນ. 58ແລ້ວເຂົາໄດ້ຊຸກທ່ານອອກໄປຈາກກຸງ ແລະຄວ່າງ
ກ້ອນຫີນໃສ່ ຝ່າຍຄົນທັງຫລາຍທີ່ເປັນພະຍານຕໍ່ສູ້ຊະເຕຟາໂນ ກໍປົດເສື້ອຂອງຕົນໄວ້ໃກ້ຕີນ
ຂອງຊາຍໜຸ່ມຜູ້ໜຶ່ງຊື່ ໂຊໂລ. 59ເຂົາຈຶ່ງ ເອົາກ້ອນຫີນຄວ່າງ ໃສ່ ຊະເຕຟາໂນ ເມື່ອທ່ານກຳລັງ
ອ້ອນວອນທູນວ່າ, “ຂ້າແດ່ ພຣະເຢຊູເຈົ້າ, ຂໍຊົງ ໂຜດຮັບ ເອົາຈິດວິນຍານຂອງຂ້າພຣະອົງໄວ້
ເທີນ.” 60ຊະເຕຟາໂນ ໄດ້ຄຸເຂົ່າລົງ ແລ້ວຮ້ອງສຽງດັງຂຶ້ນວ່າ, “ຂ້າແດ່ອົງ ພຣະຜູ້ເປັນເຈົ້າ, ຂໍ
ໂຜດຢ່າຊົງຖືໂທດເຂົາເພາະບາບນີ້” ເມື່ອກ່າວດັ່ງນັ້ນແລ້ວທ່ານກໍລ່ວງລັບໄປ.

# ບົດທີ 8

## ຝ່າຍໂຊໂລກໍເຫັນດີໃນການທີ່ເຂົາຂ້າຊະເຕຟາໂນເສຍ
## ໂຊໂລຂົ່ມເຫງຄຣິສຕະຈັກ

1ໃນວັນນັ້ນເກີດມີການຂົ່ມເຫງອັນໃຫຍ່ຕໍ່ຄຣິສຕະຈັກທີ່ຢູ່ໃນກຸງ ເຢຣູຊາເລັມ ພວກລູກສິດທັງ
ໝົດ ເວັ້ນແຕ່ພວກອັກຄະສາວົກ ກໍໄດ້ແຈກກະຈັດກະຈາຍໄປທົ່ວແຂວງຢູດາຍ ແລະແຂວງຊາ-
ມາເຣຍ. 2ແຕ່ມີຊາຍບາງຄົນຜູ້ຢຳເກງ ພຣະເຈົ້າ ໄດ້ເອົາສົບຂອງຊະເຕຟາໂນ ໄປຝັງໄວ້ ແລະ
ມີການ ໂສກເສົ້າຮ້ອງໄຫ້ອັນໃຫຍ່ ເພາະທ່ານ. 3ຝ່າຍ ໂຊໂລ ພະຍາຍາມທຳລາຍຄຣິສຕະຈັກຢ່າງ
ຮຸນແຮງ ໂດຍເຂົ້າໄປຕາມຍ້າວເຮືອນລາກເຂົາທັງຍິງແລະຊາຍໄປຂັງໄວ້ໃນຄຸກ.

## ການປະກາດຂ່າວປະເສີດໃນແຂວງຊາມາເຣຍ

4ຝ່າຍສິດທັງຫລາຍທີ່ ແຕກກະຈັດກະຈາຍ ໄປນັ້ນ ກໍພາກັນໄປປະກາດຂ່າວປະເສີດ ແຫ່ງ
ພຣະທຳຕາມບ່ອນຕ່າງໆ. 5ສ່ວນ ຟີລິບ ໄດ້ລົງໄປຍັງ ເມືອງໜຶ່ງທີ່ແຂວງ ຊາມາເຣຍ ປະກາດ
ເລື່ອງ ພຣະຄຣິດ ໃຫ້ໄທ ເມືອງນັ້ນຟັງ. 6ເມື່ອຄົນທັງຫລາຍ ໄດ້ຍິນ ແລະ ໄດ້ ເຫັນໝາຍສຳຄັນທີ່
ທ່ານກຳລັງ ເຮັດຢູ່ນັ້ນ ເຂົາກໍພ້ອມໃຈກັນຟັງຖ້ອຍຄຳປະກາດຂອງທ່ານ. 7ດ້ວຍວ່າຜີຖ່ອຍຮ້າຍທີ່
ສິງຢູ່ໃນຫລາຍຄົນໄດ້ຮ້ອງດ້ວຍສຽງດັງແລະອອກມາຈາກຄົນ ເຫລົ່ານັ້ນ ຄົນທີ່ເປັນງ່ອຍແລະຂາ
ເສັ້ງຫລາຍຄົນກໍໄດ້ດີເປັນປົກກະຕິ. 8ຈຶ່ງບັງເກີດມີຄວາມຍິນດີອັນໃຫຍ່ໃນເມືອງນັ້ນ.

9ມີຊາຍຜູ້ໜຶ່ງຊື່ຊີໂມນ ຢູ່ໃນ ເມືອງນັ້ນ ແຕ່ກ່ອນມາເປັນໝໍເວດມົນ ເຄີຍເຮັດໃຫ້ໄທເມືອງຊາ-
ມາເຣຍງຶດງໍ້ອັດສະຈັນໃຈ ແລະອວດອ້າງວ່າເປັນຜູ້ສຳຄັນ. 10ຝ່າຍຄົນທັງປວງທັງຜູ້ນ້ອຍແລະ
ຜູ້ໃຫຍ່ກໍສົນໃຈຟັງຄົນນັ້ນ ແລ້ວເວົ້າວ່າ, “ຜູ້ນີ້ແຫລະ, ເປັນອານຸພາບຂອງ ພຣະເຈົ້າຊຶ່ງເອີ້ນວ່າ
ມະຫິດທິລິດ.” 11ຄົນທັງຫລາຍ ໄດ້ສົນໃຈຟັງຜູ້ນັ້ນ ເພາະລາວໄດ້ສະແດງ ເວດມົນໃຫ້ຄົນທັງ-
ຫລາຍງຶດງໍ້ອັດສະຈັນຕັ້ງແຕ່ເຫິງມາແລ້ວ. 12ແຕ່ເມື່ອເຂົາໄດ້ຮັບເຊື່ອຊຶ່ງ ຟີລິບ ໄດ້ປະກາດ ເປັນ
ຂ່າວປະເສີດເລື່ອງລາຊະອານາຈັກຂອງ ພຣະເຈົ້າ ແລະພຣະນາມແຫ່ງ ພຣະເຢຊູຄຣິດ ແລ້ວ ເຂົາ
ຈຶ່ງໄດ້ຮັບບັບຕິສະມາທັງຊາຍແລະຍິງ. 13ຝ່າຍຊີໂມນ ເອງກໍເຊື່ອເໝືອນກັນ ເມື່ອຮັບບັບຕິສະ-
ມາແລ້ວກໍຕິດຢູ່ກັບ ຟີລິບ ແລະປະຫລາດໃຈທີ່ໄດ້ເຫັນໝາຍສຳຄັນແລະການອິດທິລິດອັນໃຫຍ່

ທີ່ໄດ້ບັງເກີດມານັ້ນ.
14ເມື່ອພວກອັກຄະສາວົກທີ່ຢູ່ໃນກຸງ ເຢຣູຊາເລັມ ໄດ້ຍິນຂ່າວວ່າ ໄທ ຊາມາເຣຍ ໄດ້ຮັບເອົາ
ພຣະທຳຂອງ ພຣະເຈົ້າ ແລ້ວ ຈຶ່ງໄດ້ໃຊ້ ເປໂຕ ກັບ ໂຢຮັນ ໄປຫາເຂົາ. 15ທ່ານທັງສອງໄດ້ລົງໄປ
ອ້ອນວອນສຳລັບເຂົາເພື່ອໃຫ້ເຂົາໄດ້ຮັບ ພຣະວິນຍານບໍລິສຸດ. 16ເພາະ ພຣະວິນຍານບໍລິສຸດ ຍັງ
ບໍ່ທັນໄດ້ລົງມາເທິງເຂົາຈັກຄົນ ມີແຕ່ເຂົາໄດ້ຮັບບັບຕິສະມາໃນພຣະນາມແຫ່ງ ພຣະເຢຊູເຈົ້າ ເທົ່າ
ນັ້ນ. 17ເປໂຕ ກັບ ໂຢຮັນ ຈຶ່ງວາງມືໃສ່ເຂົາແລ້ວເຂົາກໍໄດ້ຮັບ ພຣະວິນຍານບໍລິສຸດ.[ກ]
18ຝ່າຍ ຊີໂມນ, ເມື່ອໄດ້ເຫັນວ່າ ພຣະວິນຍານ ເປັນທີ່ຊົງປະທານດ້ວຍການວາງມືຂອງພວກ
ອັກຄະສາວົກ ກໍໄດ້ນຳເງິນມາຈະໃຫ້ພວກທ່ານ. 19ໂດຍເວົ້າວ່າ, "ຂໍໃຫ້ຂ້ານ້ອຍມີລິດອຳນາດ
ຢ່າງນີ້ເໝືອນກັນເພື່ອວ່າ, ເມື່ອຂ້ານ້ອຍຫາກວາງມືໃສ່ຜູ້ໃດ ຜູ້ນັ້ນຈະໄດ້ຮັບ ພຣະວິນຍານບໍລິ-
ສຸດ." 20ແຕ່ ເປໂຕ ໄດ້ຕອບ ຊີໂມນ ວ່າ, "ຈົ່ງໃຫ້ເງິນຂອງເຈົ້າຈິບຫາຍໄປກັບເຈົ້າ ເພາະເຈົ້າຄຶດ
ວ່າຈະຊື້ຂອງປະທານ ແຫ່ງ ພຣະເຈົ້າ ດ້ວຍເງິນ. 21ເຈົ້າບໍ່ມີຫຸ້ນບໍ່ມີສ່ວນໃນການນີ້ ເພາະໃຈຂອງ
ເຈົ້າບໍ່ສັດຊື່ຕໍ່ ພຣະເຈົ້າ. 22ເຫດສັນນັ້ນຈົ່ງຫລົບຕັ້ງໃຈໃໝ່ຈາກການຊົ່ວຂອງເຈົ້ານີ້ ແລະອ້ອນ-
ວອນຂໍອົງ ພຣະຜູ້ເປັນເຈົ້າ ເພື່ອຫວັງວ່າພຣະອົງຈະຊົງ ໂຜດຍົກຄວາມຜິດບາບທີ່ເຈົ້າໄດ້ຄຶດໃນ
ໃຈນັ້ນເສຍ. 23ເພາະ ເຮົາ ເຫັນວ່າເຈົ້າເຕັມໄປດ້ວຍຄວາມອິດສາອັນຂົມຂື່ນ ແລະຖືກລ່າມໄວ້
ດ້ວຍໂສ້ຂອງຄວາມອະທຳ." 24ຝ່າຍ ຊີໂມນ ໄດ້ຕອບວ່າ, "ຂໍທ່ານທັງສອງອ້ອນວອນອົງ ພຣະຜູ້-
ເປັນເຈົ້າ ເພື່ອຂ້ານ້ອຍແດ່ ເພື່ອການທີ່ທ່ານໄດ້ກ່າວແລ້ວນັ້ນຈະບໍ່ຕົກໃສ່ຂ້ານ້ອຍຈັກປະການ."
25ສ່ວນທ່ານທັງສອງ, ເມື່ອໄດ້ເປັນພະຍານ ແລະປະກາດພຣະທຳ ແຫ່ງອົງ ພຣະຜູ້ເປັນເຈົ້າ
ແລ້ວ ກໍກັບມາຍັງກຸງ ເຢຣູຊາເລັມ ແລະໄດ້ປະກາດຂ່າວປະເສີດຕາມທາງໃນບ້ານຊາວ ຊາມາ-
ເຣຍ ຫລາຍແຫ່ງ.

## ຟີລິບແລະຊາວເອທີໂອເປຍຜູ້ໜຶ່ງ

26ແລະ ເທວະດາຕົນໜຶ່ງຂອງອົງ ພຣະຜູ້ເປັນເຈົ້າ ໄດ້ສັ່ງ ຟີລິບ ວ່າ, "ຈົ່ງລຸກຂຶ້ນໄປທາງທິດໃຕ້
ຕາມທາງລົງຈາກກຸງ ເຢຣູຊາເລັມ ໄປ ເຖິງ ເມືອງ ຄາຊາ" (ທີ່ເປັນທາງປ່າດົນຊາຍ). 27ທ່ານຈຶ່ງ
ລຸກຂຶ້ນເດີນທາງໄປ ແລະເບິ່ງແມ, ມີໄທ ເອທີໂອເປຍ ຄົນໜຶ່ງ, ເປັນຊາຍຕອນ, ເປັນຂ້າລາຊະ-
ການຊັ້ນສູງຂອງ ກັນດາເກ ຄືພຣະລາຊີນີຂອງຊາວ ເອທີໂອເປຍ, ເປັນນາຍຄັງຊັບທັງໝົດຂອງ
ພຣະລາຊີນີນັ້ນ ເພິ່ນໄດ້ມາທີ່ກຸງ ເຢຣູຊາເລັມ ເພື່ອນະມັດສະການ. 28ຂະນະທີ່ນັ່ງລົດກຳລັງກັບ
ເມືອ ທ່ານໄດ້ອ່ານໜັງສືຂອງ ເອຊາຢາ ຜູ້ປະກາດພຣະທຳຢູ່. 29ຝ່າຍ ພຣະວິນຍານ ຊົງສັ່ງ ຟີລິບ
ວ່າ, "ຈົ່ງເຂົ້າຕິດກັບລົດນີ້ໄປ." 30ຟີລິບ ຈຶ່ງ ແລ່ນເຂົ້າໄປແລະໄດ້ຍິນທ່ານກຳລັງອ່ານໜັງສື ເອ-
ຊາຢາ ຜູ້ປະກາດພຣະທຳຢູ່ ຈຶ່ງຖາມວ່າ, "ຊຶ່ງທ່ານອ່ານນັ້ນທ່ານເຂົ້າໃຈຫລື." 31ທ່ານຈຶ່ງຕອບ
ວ່າ, "ຖ້າບໍ່ມີຜູ້ໃດ ແນະນຳໃຫ້ ຈະເຂົ້າໃຈໄດ້ຢ່າງໃດ" ແລ້ວທ່ານຈຶ່ງເຊີນ ຟີລິບ ຂຶ້ນນັ່ງລົດນຳ.
32ພຣະຄຳພີຕອນທີ່ທ່ານອ່ານຢູ່ນັ້ນຄືຂໍ້ເຫລົ່ານີ້,

"ເຂົາໄດ້ນຳທ່ານໄປເໝືອນນຳເອົາແກະໄປຂ້າ
ແລະເໝືອນແກະນ້ອຍມິດຢູ່ຕໍ່ໜ້າຜູ້ຕັດຂົນມັນ

[ກ]ເປັນລຳດັບໄປ.

ທ່ານກໍບໍ່ອອກປາກເໝືອນກັນ.
33 ໃນຄາວທ່ານຕົກຕ່ຳຕ້ອຍ
ທ່ານບໍ່ໄດ້ຮັບຄວາມຍຸດຕິທຳ
ໃຜຈະເຫລົ່າເຖິງເຊື້ອສາຍ[ກ]ຂອງທ່ານໄດ້
ເພາະວ່າຊີວິດຂອງທ່ານໄດ້ຖືກຕັດເສຍ.”

34ຊາຍຕອນໄດ້ກ່າວແກ່ ຟີລິບ ວ່າ, “ຂໍທ່ານບອກໃຫ້ຂ້າພະເຈົ້າຮູ້ວ່າ ຜູ້ປະກາດພຣະທຳໄດ້
ກ່າວຢ່າງນີ້ເລົ່າເຖິງຜູ້ໃດ ເຖິງຕົນເອງຫລືເຖິງຜູ້ອື່ນ.” 35ແລ້ວ ຟີລິບ ຈຶ່ງອອກປາກ[ຂ] ຕັ້ງຕົ້ນເລົ່າ
ແຕ່ພຣະຄຳຕອນນັ້ນ ຈຶ່ງປະກາດຂ່າວປະເສີດເລື່ອງ ພຣະເຢຊູ ໃຫ້ທ່ານຟັງ. 36ເມື່ອເຂົາກຳລັງ
ເດີນທາງໄປກໍມາເຖິງບ່ອນມີນ້ຳບ່ອນໜຶ່ງ ຊາຍຕອນຈຶ່ງເວົ້າວ່າ, “ເບິ່ງແມ, ນ້ຳມີຢູ່ທີ່ນີ້ ມີອັນໃດ
ຂັດຂ້ອງບໍ່ໃຫ້ຂ້າພະເຈົ້າຮັບບັບຕິສະມາ.” 37[ຝ່າຍ ຟີລິບ ຈຶ່ງຕອບວ່າ, “ຖ້າທ່ານເຕັມໃຈເຊື່ອກໍໄດ້
ຮັບ” ຊາຍຕອນຈຶ່ງຕອບວ່າ, “ເຮົາເຊື່ອວ່າ ພຣະເຢຊູຄຣິດ ຊົງເປັນ ພຣະບຸດ ຂອງ ພຣະເຈົ້າ.”]
38ແລ້ວທ່ານໄດ້ສັ່ງໃຫ້ຢຸດລົດ ຟີລິບ ກັບຊາຍຕອນໄດ້ພ້ອມກັນລົງໄປໃນນ້ຳ ຟີລິບ ຈຶ່ງໃຫ້ທ່ານ
ຮັບບັບຕິສະມາ. 39ເມື່ອທ່ານທັງສອງຂຶ້ນຈາກນ້ຳແລ້ວ ພຣະວິນຍານ ຂອງອົງ ພຣະຜູ້ເປັນເຈົ້າ
ໄດ້ຊົງຮັບເອົາ ຟີລິບ ໄປເສຍ ສ່ວນຊາຍຕອນນັ້ນກໍບໍ່ໄດ້ເຫັນ ຟີລິບ ຕໍ່ໄປອີກ ທ່ານຈຶ່ງເດີນທາງຕໍ່
ໄປດ້ວຍຄວາມຊົມຊື່ນຍິນດີ. 40ແຕ່ມີຜູ້ພົບ ຟີລິບ ທີ່ເມືອງ ອາໂຊໂຕ ທ່ານໄດ້ອອກໄປປະກາດ
ຂ່າວປະເສີດທົ່ວທຸກເມືອງ ຈົນມາເຖິງເມືອງ ກາຍຊາເຣຍ.

# ບົດທີ 9

## ໂຊໂລຫລົບຕັ້ງໃຈໃໝ່

*(ກຈກ 22:6-16; 26:12-18)*

1ຝ່າຍ ໂຊໂລ ຍັງຄູ່ເຂນວ່າຈະຂ້າພວກສິດຂອງອົງ ພຣະຜູ້ເປັນເຈົ້າ ເສຍ ຈຶ່ງໄປຫາມະຫາປະ-
ໂລຫິດ. 2ຂໍໜັງສືກຳກັບຕົວໄປຍັງ ໂຮງທຳມະເທດສະໜາໃນ ເມືອງ ດາມາເຊ ເພື່ອວ່າຖ້າພົບຄົນ
ໃດຖືທາງນັ້ນບໍ່ວ່າຊາຍຫລືຍິງ ຈະໄດ້ຈັບມັດພາມາຍັງກຸງ ເຢຣູຊາເລັມ. 3ເມື່ອ ໂຊໂລ ກຳລັງເດີນ-
ທາງໃກ້ຈະ ເຖິງ ເມືອງ ດາມາເຊ ໃນທັນໃດນັ້ນມີແສງສະຫວ່າງມາບມາຈາກຟ້າອ້ອມຮອບຕົວ
ທ່ານ. 4ໂຊໂລ ຈຶ່ງລົ້ມລົງເທິງດິນ ແລະໄດ້ຍິນພຣະສຸລະສຽງອັນໜຶ່ງດັ່ງມາວ່າ, “ໂຊໂລ, ໂຊໂລ
ເອີຍ, ເປັນຫຍັງເຈົ້າຈຶ່ງຂົ່ມເຫງເຮົາ.” 5ໂຊໂລ ໄດ້ທູນຖາມວ່າ, “ທ່ານເອີຍ, ທ່ານແມ່ນໃຜ”
ພຣະອົງຊົງຕອບວ່າ, “ເຮົານີ້ແມ່ນ ເຢຊູ ຜູ້ເຈົ້າຂົ່ມເຫງນັ້ນແຫລະ. 6ເຈົ້າຈົ່ງລຸກຂຶ້ນເຂົ້າໄປໃນ
ເມືອງ ຈະມີຜູ້ບອກໃຫ້ຮູ້ວ່າເຈົ້າຈຳເປັນຕ້ອງເຮັດອັນໃດ.” 7ຊາຍທັງຫລາຍທີ່ເດີນທາງໄປພ້ອມ
ກັນກໍນິ້ງຢູ່ ປາກບໍ່ອອກ ເຂົາໄດ້ຍິນສຽງນັ້ນແຕ່ບໍ່ເຫັນຜູ້ໃດ. 8ຝ່າຍ ໂຊໂລ ໄດ້ລຸກຂຶ້ນຈາກດິນ
ເມື່ອມືນຕາ ແລ້ວກໍບໍ່ ເຫັນສິ່ງໃດຄົນ ເຫລົ່ານັ້ນຈຶ່ງ ຈູງທ່ານ ເຂົ້າໄປໃນ ເມືອງ ດາມາເຊ. 9ໃນລະ-
ຫວ່າງສາມວັນທ່ານບໍ່ໄດ້ເຫັນສິ່ງໃດ ທັງບໍ່ໄດ້ກິນບໍ່ໄດ້ດື່ມ.

10ອັນໜຶ່ງ, ໃນເມືອງ ດາມາເຊ ມີສິດຜູ້ໜຶ່ງຊື່ ອານາເນຍ ອົງ ພຣະຜູ້ເປັນເຈົ້າ ໄດ້ຊົງກ່າວກັບຜູ້

[ກ]“ເຖິງດາວຂອງທ່ານ” ຫລືວ່າ “ເຖິງຕົ້ນເດີມຂອງທ່ານ.” [ຂ]ຄຳວ່າ “ອອກປາກ” ນີ້ເຄີຍໃຊ້ເພື່ອນຳຂໍ້-
ຄວາມສຳຄັນມາ (ເຊີນເບິ່ງ ມທ 5:2).

ນັ້ນໂດຍນິມິດວ່າ, "ອານາເນຍ ເອີຍ" ອານາເນຍຈຶ່ງທູນຕອບວ່າ, "ພຣະອົງເຈົ້າຂ້າ, ຂ້າພຣະ-
ອົງຢູ່ທີ່ນີ້." [11]ອົງພຣະຜູ້ເປັນເຈົ້າຊົງບອກທ່ານວ່າ, "ຈົ່ງລຸກຂຶ້ນໄປເຖິງຖະໜົນສາຍທີ່ຊື່ວ່າຖະ-
ໜົນຊື່ ແລ້ວຈົ່ງຖາມຫາຄົນຜູ້ໜຶ່ງຢູ່ໃນເຮືອນຂອງຢູດາ ຊື່ວ່າໂຊໂລໄທເມືອງຕາໂຊ ເພາະເບິ່ງ
ແມ, ລາວກຳລັງໄຫວ້ວອນຢູ່. [12]ແລະລາວໄດ້ເຫັນ [ໃນນິມິດ] ວ່າມີຊາຍຜູ້ໜຶ່ງຊື່ອານາເນຍ
ໄດ້ເຂົ້າມາວາງມືໃສ່ເພື່ອໃຫ້ລາວໄດ້ເຫັນຮຸ່ງອີກ." [13]ແຕ່ອານາເນຍໄດ້ທູນຕອບວ່າ, "ພຣະອົງ
ເຈົ້າຂ້າ, ຂ້າພຣະອົງໄດ້ຍິນຫລາຍຄົນເວົ້າເຖິງເລື່ອງຄົນນັ້ນ ວ່າເພິ່ນໄດ້ເຮັດການຮ້າຍຂາດຕໍ່ໄພ່
ພົນຂອງພຣະອົງໃນກຸງເຢຣູຊາເລັມຫລາຍມາແລ້ວ. [14]ແລະໃນທີ່ນີ້ເພິ່ນໄດ້ຖືອຳນາດຈາກພວກ
ປະໂລຫິດຕົນໃຫຍ່ມາມັດເອົາຄົນທັງໝົດຜູ້ຮ້ອງອອກພຣະນາມຂອງພຣະອົງ." [15]ຝ່າຍອົງພຣະ-
ຜູ້ເປັນເຈົ້າໄດ້ຊົງກ່າວວ່າ, "ເຈົ້າຈົ່ງໄປ ເພາະວ່າຄົນນັ້ນເປັນພາຊະນະທີ່ເຮົາໄດ້ເລືອກໄວ້ ເພື່ອ
ຈະນຳນາມຂອງເຮົາໄປຍັງບັນດາປະຊາຊາດ, ໄປຍັງກະສັດທັງຫລາຍ, ແລະໄປຍັງຊົນຊາດອິ-
ສຣາເອນ. [16]ເພາະວ່າຝ່າຍເຮົາຈະສະແດງໃຫ້ລາວເຫັນວ່າ ລາວຕ້ອງທົນທຸກລຳບາກຫລາຍ
ເທົ່າໃດເພາະນາມຂອງເຮົາ." [17]ແລ້ວອານາເນຍກໍໄປ ແລະເຂົ້າໃນເຮືອນນັ້ນວາງມືໃສ່ໂຊໂລ
ເວົ້າວ່າ, "ອ້າຍໂຊໂລ ເອີຍ, ອົງພຣະຜູ້ເປັນເຈົ້າຄືພຣະເຢຊູຊຶ່ງໄດ້ປະກົດແກ່ເຈົ້າຕາມທາງທີ່
ເຈົ້າກຳລັງມານັ້ນ ໄດ້ຊົງໃຊ້ເຮົາມາເພື່ອເຈົ້າຈະໄດ້ເຫັນຮຸ່ງອີກ ແລະເພື່ອຈະເຕັມໄປດ້ວຍພຣະ-
ວິນຍານບໍລິສຸດ." [18]ໃນທັນໃດນັ້ນມີສິ່ງໜຶ່ງເໝືອນເກັດຕົກຈາກຕາຂອງໂຊໂລ ແລ້ວທ່ານໄດ້
ເຫັນເປັນປົກກະຕິຈຶ່ງລຸກຂຶ້ນຮັບບັບຕິສະມາ. [19]ເມື່ອຮັບປະທານອາຫານແລ້ວ ທ່ານກໍມີເຫື່ອ-
ແຮງຂຶ້ນ.

## ໂຊໂລປ່າວປະກາດທີ່ເມືອງດາມາເຊ

[20]ອັນໜຶ່ງ, ໂຊໂລໄດ້ພັກຢູ່ກັບພວກສິດໃນເມືອງດາມາເຊເປັນຫລາຍວັນ, ໃນບັດດຽວນັ້ນ
ທ່ານໄດ້ປະກາດເລື່ອງພຣະເຢຊູ ໃນໂຮງທຳມະເທດສະໜາ ວ່າພຣະອົງນີ້ແຫລະ, ຊົງເປັນ
ພຣະບຸດຂອງພຣະເຈົ້າ. [21]ເມື່ອຄົນທັງຫລາຍໄດ້ຍິນກໍພາກັນງຶດງໍ້ອັດສະຈັນໃຈ ແລ້ວເວົ້າວ່າ,
"ແມ່ນຜູ້ນີ້ແຫລະ, ທີ່ໄດ້ທຳຮ້າຍຄົນທັງຫລາຍໃນກຸງເຢຣູຊາເລັມທີ່ຮ້ອງອອກນາມຊື່ນີ້ ບໍ່ແມ່ນ
ຫລື ເພິ່ນໄດ້ມາທີ່ນີ້ຫວັງຈະຜູກມັດເອົາພວກນັ້ນສົ່ງໃຫ້ພວກປະໂລຫິດຕົນໃຫຍ່." [22]ແຕ່ການ
ປະກາດຂອງໂຊໂລກໍມີອຳນາດທະວີຂຶ້ນ ເຮັດໃຫ້ພວກຢິວທີ່ຢູ່ໃນເມືອງດາມາເຊອັດອັ້ນຕັນໃຈ
ໂດຍພິສູດໃຫ້ເຂົາເຫັນຄັກວ່າພຣະເຢຊູນີ້ແຫລະ, ຊົງເປັນພຣະຄຣິດ.

## ໂຊໂລໜີພົ້ນຈາກພວກຢິວ

[23]ຄັນຕໍ່ມາອີກຫລາຍວັນພວກຢິວໄດ້ປຶກສາກັນເພື່ອຈະຂ້າໂຊໂລເສຍ. [24]ແຕ່ມີຄົນບອກໃຫ້
ໂຊໂລຮູ້ເຖິງການປອງຮ້າຍຂອງເຂົາ ສ່ວນເຂົາໄດ້ເຝົ້າປະຕູເມືອງທັງກາງເວັນແລະກາງຄືນເພື່ອ
ຄອຍຂ້າໂຊໂລ. [25]ແຕ່ເວລາກາງຄືນພວກລູກສິດຂອງທ່ານໄດ້ເອົາທ່ານໃສ່ກວຍຢ່ອນລົງຕາມ
ປ່ອງກຳແພງ.

## ໂຊໂລທີ່ກຸງເຢຣູຊາເລັມ

[26]ເມື່ອໂຊໂລມາຮອດກຸງເຢຣູຊາເລັມແລ້ວ ກໍພະຍາຍາມຈະເຂົ້າສະໜິດສະໜົມກັບພວກລູກ-
ສິດ ແຕ່ພວກເຫລົ່ານັ້ນຍັງຢ້ານທ່ານຢູ່ ເພາະບໍ່ເຊື່ອວ່າທ່ານເປັນລູກສິດ. [27]ແຕ່ບາຣະນາບາໄດ້

ພາທ່ານໄປຫາພວກອັກຄະສາວົກ ແລະເລົ່າເລື່ອງໃຫ້ເຂົາຟັງວ່າ ໂຊໂລໄດ້ເຫັນອົງພຣະຜູ້ເປັນ-
ເຈົ້າໃນກາງທາງນັ້ນຢ່າງໃດ, ແລະພຣະອົງໄດ້ຊົງກ່າວກັບທ່ານ, ແລະທ່ານໄດ້ປະກາດອອກ
ພຣະນາມພຣະເຢຊູໃນເມືອງດາມາເຊດ້ວຍໃຈກ້າ. [28]ໂຊໂລໄດ້ເຂົ້ານອກອອກໃນຢູ່ກັບເຂົາໃນ
ກຸງເຢຣູຊາເລັມ ປະກາດອອກພຣະນາມຂອງອົງພຣະຜູ້ເປັນເຈົ້າດ້ວຍໃຈກ້າຫານ. [29]ແລະ
ທ່ານເຄີຍສົນທະນາໄລ່ລຽງກັບພວກທີ່ປາກພາສາກຣີກ ແຕ່ເຂົາພະຍາຍາມຈະຂ້າທ່ານເສຍ.
[30]ເມື່ອພວກພີ່ນ້ອງໄດ້ຊາບຂ່າວດັ່ງນີ້ກໍໄດ້ພາທ່ານລົງໄປທີ່ເມືອງກາຍຊາເຣຍ ແລະໃຫ້ທ່ານໜີ
ໄປຍັງເມືອງຕາໂຊ.

[31]ສັນນັ້ນຄຣິສຕະຈັກຕະຫລອດແຂວງຢູດາຍ, ແຂວງຄາລີເລ, ແລະແຂວງຊາມາເຣຍຈຶ່ງມີ
ຄວາມສະຫງົບສຸກແລະຈະເລີນຂຶ້ນ ດຳເນີນໄປໃນຄວາມຢຳເກງອົງພຣະຜູ້ເປັນເຈົ້າ ສ່ວນ
ຄຣິສຕະສະມາຊິກກໍທະວີຫລາຍຂຶ້ນດ້ວຍໄດ້ຮັບຄວາມສົ່ງເສີມຈາກພຣະວິນຍານບໍລິສຸດ.

## ໄອເນດີພະຍາດ

[32]ອັນໜຶ່ງ, ເມື່ອເປໂຕກຳລັງທຽວໄປມາຕະຫລອດທຸກບ່ອນ ກໍໄດ້ລົງໄປຫາພວກໄພ່ພົນຂອງ
ພຣະເຈົ້າທີ່ອາໃສຢູ່ໃນເມືອງລິດດາເໝືອນກັນ. [33]ໃນທີ່ນັ້ນເປໂຕໄດ້ພົບຊາຍຄົນໜຶ່ງຊື່ໄອເນ
ເປັນເປ້ຍນອນໄດ້ແປດປີແລ້ວ. [34]ເປໂຕໄດ້ບອກກັບຊາຍນັ້ນວ່າ, "ໄອເນເອີຍ, ພຣະເຢຊູຄຣິດ
ຊົງໂຜດໃຫ້ເຈົ້າດີພະຍາດ ຈົ່ງລຸກຂຶ້ນມ້ຽນບ່ອນນອນຂອງເຈົ້າໄວ້ເສຍ" ໄອເນກໍໄດ້ລຸກຂຶ້ນໃນ
ທັນທີ. [35]ບັນດາຄົນທັງຫລາຍທີ່ຢູ່ໃນເມືອງລິດດາແລະຊາບຊາໂຣນກໍໄດ້ເຫັນດັ່ງນັ້ນ ຈຶ່ງພາກັນ
ກັບໃຈຕ່າວເຂົ້າມາຫາອົງພຣະຜູ້ເປັນເຈົ້າ.

## ໂດຣະກາເປັນຄືນມາ

[36]ໃນເມືອງຢົບປາມີສິດຄົນໜຶ່ງຊື່ຕາບີທາ ທີ່ແປວ່າໂດຣະກາ[ກ] ນາງນີ້ເຄີຍເຮັດແຕ່ຄຸນ-
ງາມຄວາມດີ ແລະເຄີຍໃຫ້ທານມາແລ້ວ. [37]ລະຫວ່າງນັ້ນນາງກໍປ່ວຍລົງເຖິງແກ່ຄວາມຕາຍ
ເມື່ອເຂົາໄດ້ອາບນ້ຳໃຫ້ສົບແລ້ວກໍເອົາຂຶ້ນວາງໄວ້ຫ້ອງຊັ້ນເທິງ. [38]ເມືອງລິດດາຢູ່ໃກ້ກັບເມືອງ
ຢົບປາ ເມື່ອໄດ້ຍິນຂ່າວວ່າເປໂຕຢູ່ໃນເມືອງນັ້ນ ພວກສິດຈຶ່ງໃຊ້ຊາຍສອງຄົນໄປຫາທ່ານ
ອ້ອນວອນວ່າ, "ເຊີນມາຫາພວກເຮົາ ຢ່າໄດ້ຊ້າ." [39]ຝ່າຍເປໂຕກໍລຸກຂຶ້ນໄປກັບເຂົາ ເມື່ອມາ
ເຖິງແລ້ວເຂົາກໍພາທ່ານຂຶ້ນໄປຍັງຫ້ອງຊັ້ນເທິງ ບັນດາແມ່ໝ້າຍໄດ້ຢືນຢູ່ກັບທ່ານພາກັນຮ້ອງໄຫ້
ແລະຊີ້ໃຫ້ເພິ່ນເບິ່ງເສື້ອຜ້າຕ່າງໆ ທີ່ໂດຣະກາໄດ້ເຮັດເມື່ອຍັງຢູ່ນຳເຂົາ. [40]ແຕ່ເປໂຕໄດ້ໃຫ້ຄົນ
ທັງໝົດອອກໄປຂ້າງນອກ ທ່ານຈຶ່ງຄຸເຂົ່າລົງອ້ອນວອນ ແລ້ວຫັນໜ້າໄປຫາສົບກ່າວວ່າ, "ຕາ-
ບີທາເອີຍ, ຈົ່ງລຸກຂຶ້ນ" ຕາບີທາກໍມືນຕາ ແລະເມື່ອເຫັນເປໂຕກໍລຸກຂຶ້ນນັ່ງ. [41]ແລະເປໂຕໄດ້
ຢື່ນມືຊູນາງຂຶ້ນ ແລະເມື່ອໄດ້ເອີ້ນພວກໄພ່ພົນກັບບັນດາແມ່ໝ້າຍເຂົ້າມາແລ້ວ ຈຶ່ງໄດ້ສະເໜີ
ນາງຜູ້ເປັນຄືນມານັ້ນແກ່ເຂົາ. [42]ເຫດການນັ້ນໄດ້ເປັນທີ່ຮູ້ທົ່ວກັນໃນເມືອງຢົບປາມີຄົນຈຳນວນ
ຫລາຍໄດ້ເຊື່ອວາງໃຈໃນອົງພຣະຜູ້ເປັນເຈົ້າ. [43]ຝ່າຍເປໂຕກໍໄດ້ອາໃສຢູ່ໃນເມືອງຢົບປາ
ຫລາຍວັນຢູ່ກັບຜູ້ໜຶ່ງຊື່ວ່າຊີໂມນ ເປັນຊ່າງຟອກໜັງ.

[ກ]ຕາບີທາ ຄືພາສາເຮັບເຣີ ໂດຣະກາ ຄືພາສາກຣີກ ທັງສອງໝາຍຄວາມວ່າ ໂຕເຍືອງ.

# ບົດທີ 10

## ເປໂຕແລະໂກເນລີໂອ

1ອັນໜຶ່ງ, ທີ່ເມືອງ ກາຍຊາເຣຍ ມີຊາຍຄົນໜຶ່ງຊື່ ໂກເນລີໂອ ເປັນນາຍຮ້ອຍຢູ່ໃນກອງທະ-
ຫານທີ່ເອີ້ນວ່າກອງ ອີຕາເລຍ. 2ທ່ານ ເປັນຜູ້ຖືສາດສະໜາຢ່າງຖືກຕ້ອງ ແລະຢຳເກງ ພຣະເຈົ້າ
ພ້ອມກັບຄອບ ເຮືອນຂອງຕົນ ທ່ານ ເຄີຍໃຫ້ທານ ແກ່ປະຊາຊົນຢ່າງຫລວງຫລາຍ ແລະໄຫວ້
ວອນ ພຣະເຈົ້າ ຢູ່ສະເໝີ. 3ຢູ່ມາມື້ໜຶ່ງປະມານເກົ້າໂມງ[ກ] ທ່ານໄດ້ເຫັນນິມິດຄັກ ຄືເຫັນເທວະ-
ດາຕົນໜຶ່ງຂອງ ພຣະເຈົ້າ ເຂົ້າມາຫາຕົນກ່າວວ່າ, "ໂກເນລີໂອ ເອີຍ." 4ແຕ່ເມື່ອ ໂກເນລີໂອ ເພ່ງ
ເບິ່ງເທວະດາຕົນນັ້ນກໍເກີດສະດຸ້ງຕົກໃຈ ຈຶ່ງຖາມວ່າ, "ໂອຍ ເຈົ້າກູເອີຍ, ແມ່ນຫຍັງໜໍ່" ເທ-
ວະດາໄດ້ຕອບວ່າ, "ຄຳໄຫວ້ວອນແລະການໃຫ້ທານຂອງທ່ານໄດ້ຂຶ້ນໄປ ເປັນເຫດໃຫ້ພຣະ-
ເຈົ້າລະນຶກເຖິງແລ້ວ. 5ບັດນີ້ຈົ່ງໃຊ້ຄົນໄປເມືອງຢົບປາ ເຊີນເອົາຜູ້ໜຶ່ງມາ ຄືຊີໂມນຜູ້ມີຊື່ວ່າ
ເປໂຕ. 6ທ່ານອາໃສເປັນແຂກຢູ່ກັບຊີໂມນຊ່າງຟອກໜັງ ທີ່ມີເຮືອນຢູ່ແຄມທະເລ." 7ຄັນເທວະ-
ດາຕົນທີ່ເວົ້າກັບ ໂກເນລີໂອ ນັ້ນຈາກໄປແລ້ວທ່ານໄດ້ເອີ້ນຄົນໃຊ້ປະຈຳເຮືອນສອງຄົນເຂົ້າມາຫາ
ກັບທະຫານຜູ້ໜຶ່ງທີ່ຖືສາດສະໜາຢ່າງຖືກຕ້ອງ ເປັນຜູ້ໜຶ່ງໃນຈຳພວກທະຫານທີ່ເຄີຍຮັບໃຊ້ຕົນ.
8ເມື່ອໄດ້ເລົ່າເຫດການທັງໝົດໃຫ້ເຂົາຟັງແລ້ວ ທ່ານໄດ້ໃຊ້ເຂົາໄປຍັງເມືອງຢົບປາ.

9ຕົກມື້ໜ້າມາ, ເມື່ອເຂົາກຳລັງເດີນທາງໄປໃກ້ຈະເຖິງເມືອງຢົບປານັ້ນ ຝ່າຍ ເປໂຕ ໄດ້ຂຶ້ນ
ເມືອເທິງຫລັງຄາຕຶກເພື່ອໄຫວ້ວອນ ເປັນເວລາປະມານຫົກໂມງ[ຂ] . 10ທ່ານກໍເກີດຫິວຢາກຮັບ
ປະທານອາຫານ ແຕ່ໃນລະຫວ່າງທີ່ເຂົາກຳລັງຈັດອາຫານຢູ່ນັ້ນ ເປໂຕກໍລືມຕົວໄປ. 11ແລະໄດ້
ເຫັນທ້ອງຟ້າໄຂອອກ ມີສິ່ງໜຶ່ງກຳລັງລົງມາເໝືອນຜ້າຜືນໃຫຍ່ຜູກໄວ້ທາງສີ່ແຈ ຢ່ອນລົງມາ
ເຖິງດິນ. 12ໃນສິ່ງນັ້ນມີສັດທຸກຊະນິດ ຄືສັດສີ່ຕີນ, ສັດໄຕ່ສັດຄານທີ່ຢູ່ຕາມໜ້າດິນ, ແລະນົກທີ່
ບິນໄປໃນອາກາດ. 13ແລະເກີດມີພຣະສຸລະສຽງມາວ່າ, "ເປໂຕ ເອີຍ, ຈົ່ງລຸກຂຶ້ນ ຂ້າກິນເສຍ."
14ຝ່າຍ ເປໂຕ ຈຶ່ງທູນວ່າ, "ບໍ່ໄດ້ແທ້ ພຣະອົງເຈົ້າເອີຍ, ເພາະວ່າສິ່ງທີ່ເປັນຂອງຕ້ອງຫ້າມ ຫລື
ສິ່ງທີ່ບໍ່ທັນຊຳລະໃຫ້ອາດ ຂ້າພຣະອົງບໍ່ໄດ້ຮັບປະທານຈັກເທື່ອ." 15ແລ້ວມີພຣະສຸລະສຽງອີກ
ເປັນ ເທື່ອທີສອງວ່າ, "ສິ່ງທີ່ ພຣະເຈົ້າ ຊົງຊຳລະ ແລ້ວ ຝ່າຍທ່ານຢ່າຖືເປັນຂອງຕ້ອງຫ້າມ."
16ການນັ້ນເກີດມາເຖິງສາມເທື່ອ ແລ້ວສິ່ງນັ້ນກໍຖືກຮັບຂຶ້ນໄປໃນທ້ອງຟ້າທັນທີ.

17ເມື່ອ ເປໂຕ ຍັງຄຶດບໍ່ອອກວ່າ ນິມິດໃດທີ່ຕົນໄດ້ເຫັນນັ້ນມີຄວາມໝາຍຢ່າງໃດ ເບິ່ງແມ,
ພວກຊາຍທີ່ ໂກເນລີໂອ ໄດ້ໃຊ້ມານັ້ນ ເມື່ອໄດ້ສືບຖາມຫາຕຶກຂອງຊີໂມນ ແລ້ວ ກໍໄດ້ມາຢືນຢູ່ຕໍ່-
ໜ້າປະຕູບ້ານ. 18ຮ້ອງຖາມວ່າ ຊີໂມນ ທີ່ເອີ້ນວ່າ ເປໂຕ ພັກຢູ່ທີ່ນັ້ນຫລືບໍ່. 19ຂະນະທີ່ ເປໂຕ ກຳລັງ
ຄຶດຕຶກຕອງເຖິງນິມິດນັ້ນ ພຣະວິນຍານ ຊົງກ່າວກັບທ່ານວ່າ, "ເບິ່ງແມ, ມີພວກຊາຍ [ສອງ
ຄົນ][ຄ] ມາຖາມຫາທ່ານ. 20ຈົ່ງລຸກຂຶ້ນລົງໄປຂ້າງລຸ່ມແລ້ວໄປກັບເຂົາ ຢ່າລັງເລໃຈ ເພາະເຮົານີ້
ແຫລະ, ໄດ້ໃຊ້ເຂົາມາ." 21ເປໂຕ ຈຶ່ງລົງໄປຫາຄົນເຫລົ່ານັ້ນແລະບອກເຂົາວ່າ, "ເຮົານີ້ແຫລະ,
ແມ່ນຜູ້ທີ່ພວກທ່ານກຳລັງຊອກຫານັ້ນ ທ່ານມີທຸລະອັນໃດ." 22ເຂົາຈຶ່ງຕອບວ່າ, "ນາຍຮ້ອຍ

[ກ]ສະໄໝປັດຈຸບັນນີ້ ເຄີຍເວົ້າວ່າ ບ່າຍສາມໂມງ. [ຂ]ສະໄໝປັດຈຸບັນ ເຄີຍເວົ້າວ່າ ເວລາທ່ຽງ. [ຄ]ສຳເນົາເກົ່າແກ່ບາງສະບັບມີຄຳວ່າ "ສາມຄົນ."

ໂກເນລີໂອ ເປັນຄົນສັດຊື່ແລະຢຳເກງ ພຣະເຈົ້າ ທັງເປັນຜູ້ມີຊື່ສຽງດີໃນທ່າມກາງບັນດາຊາວຢິວ
ທ່ານຜູ້ນັ້ນໄດ້ຮັບຄຳສັ່ງຈາກເທວະດາບໍລິສຸດຕົນໜຶ່ງ ໃຫ້ມາເຊີນທ່ານໄປຍັງເຮືອນຂອງຕົນ
ເພື່ອຈະໄດ້ຟັງຖ້ອຍຄຳຂອງທ່ານ.” [23]ເປໂຕ ຈຶ່ງເຊີນເຂົາເຂົ້າມາພັກນຳຕົນ

ຕົກມື້ໜ້າມາທ່ານໄດ້ລຸກຂຶ້ນອອກໄປກັບເຂົາ ແລະພີ່ນ້ອງລາງຄົນທີ່ເມືອງຢົບປາກໍໄປນຳ.
[24]ວັນຕໍ່ມາທ່ານໄດ້ມາເຖິງເມືອງ ກາຍຊາເຣຍ ຝ່າຍ ໂກເນລີໂອ ກຳລັງຄອຍຕ້ອນຮັບຢູ່ ໂດຍໄດ້
ເຊີນເອົາພວກພີ່ນ້ອງ ແລະມິດສະຫາຍຂອງຕົນໃຫ້ມາປະຊຸມກັນຢູ່ແລ້ວ. [25]ເມື່ອ ເປໂຕ ເຂົ້າໄປ
ໂກເນລີໂອກໍມາຕ້ອນຮັບ ແລະໝູບລົງທີ່ຕີນຂາບໄຫວ້ທ່ານ. [26]ແຕ່ ເປໂຕ ໄດ້ດຶງໃຫ້ ໂກເນລີໂອ
ລຸກຂຶ້ນ ໂດຍເວົ້າວ່າ, “ຈົ່ງຢືນຂຶ້ນ ຝ່າຍເຮົາກໍເປັນແຕ່ມະນຸດເໝືອນກັນ.” [27]ເມື່ອກຳລັງສົນທະ-
ນາກັນຢູ່ ເປໂຕ ກໍເຂົ້າໄປ ແລະເຫັນມີຫລາຍຄົນຊຸມນຸມກັນຢູ່. [28]ທ່ານໄດ້ກ່າວກັບຄົນເຫລົ່ານັ້ນ
ວ່າ, “ທ່ານທັງຫລາຍຊາບດີແລ້ວວ່າ ທີ່ຄົນຊາດຢິວຈະເຂົ້າຮ່ວມມາຄົມກັບຄົນຕ່າງຊາດ ຫລື
ເຂົ້າຫາເຂົາກໍເປັນການຕ້ອງຫ້າມ ແຕ່ຝ່າຍເຮົາ ພຣະເຈົ້າ ໄດ້ຊົງສະແດງວ່າ ບໍ່ຄວນຖືຄົນໜຶ່ງຄົນ
ໃດວ່າເປັນຄົນຕ້ອງຫ້າມຫລືບໍ່ອາດ. [29]ດັ່ງນັ້ນເມື່ອພວກທ່ານໄດ້ໃຊ້ຄົນໄປເຊີນເຮົາ ເຮົາກໍມາ
ໂດຍບໍ່ຂັດ ດ້ວຍເຫດນີ້ເຮົາຈຶ່ງຂໍຖາມພວກທ່ານວ່າ ເປັນດ້ວຍປະການໃດ ທ່ານຈຶ່ງໄດ້ໃຊ້ຄົນໄປ
ຫາເຮົາ.” [30]ໂກເນລີໂອ ໄດ້ຕອບວ່າ, “ໄດ້ສີ່ວັນມາແລ້ວ ຂ້ານ້ອຍກຳລັງໄຫວ້ວອນຢູ່ໃນເຮືອນ
ຂອງຂ້ານ້ອຍປະມານເວລານີ້ ຄືເວລາເກົ້າໂມງ[ກ] ດັ່ງນີ້ມີຊາຍຜູ້ໜຶ່ງນຸ່ງເຄື່ອງເຫລື້ອມໃສມາຢືນ
ຢູ່ຕໍ່ໜ້າຂ້ານ້ອຍ. [31]ແລ້ວເວົ້າວ່າ, ‘ໂກເນລີເອີຍ, ຄຳໄຫວ້ວອນຂອງທ່ານ ພຣະເຈົ້າຊົງລະດັບ
ຟັງ ແລະການໃຫ້ທານຂອງທ່ານກໍເປັນເຫດໃຫ້ ພຣະເຈົ້າ ຊົງລະນຶກເຖິງ. [32]ເຫດສັນນັ້ນຈົ່ງໃຊ້
ຄົນໄປເມືອງຢົບປາ ເຊີນເອົາຊີໂມນຜູ້ມີຊື່ວ່າ ເປໂຕ ມາ ເພິ່ນເປັນແຂກອາໃສຢູ່ໃນເຮືອນຂອງ
ຊີໂມນ ຊ່າງຟອກໜັງຢູ່ແຄມທະເລ.’ [33]ໃນທັນທີນັ້ນຂ້ານ້ອຍໄດ້ໃຊ້ຄົນໄປຫາທ່ານ ທີ່ທ່ານກະລຸ-
ນາກໍເປັນການດີແທ້ ບັດນີ້ຂ້ານ້ອຍທັງຫລາຍຢູ່ພ້ອມກັນຕໍ່ພຣະພັກ ພຣະເຈົ້າ ເພື່ອຈະຟັງສິ່ງສາ-
ລະພັດຊຶ່ງອົງ ພຣະຜູ້ເປັນເຈົ້າ ໄດ້ຊົງສັ່ງໄວ້ແກ່ທ່ານ.

## ເປໂຕກ່າວຄຳປາໄສທີ່ເຮືອນຂອງໂກເນລີໂອ

[34]ສ່ວນ ເປໂຕ ຈຶ່ງອອກປາກ[ຂ] ວ່າ “ຂ້າພະເຈົ້າສັງເກດຮູ້ຄັກແນ່ວ່າ ພຣະເຈົ້າບໍ່ຊົງເລືອກໜ້າ
ຜູ້ໃດ.” [35]ແຕ່ໃນທຸກຊາດຜູ້ໃດທີ່ຢຳເກງພຣະອົງ ແລະປະຕິບັດຖືກຕາມສິນທຳ ກໍເປັນທີ່ຊອບ
ພຣະໄທພຣະອົງ. [36]ເລື່ອງທີ່ພຣະອົງໄດ້ຊົງສັ່ງມາໃຫ້ພວກ ອິສຣາເອນ ໂດຍປະກາດຂ່າວປະ-
ເສີດ ເລື່ອງສັນຕິສຸກດ້ວຍ ພຣະເຢຊູຄຣິດ (ຜູ້ຊົງເປັນອົງ ພຣະຜູ້ເປັນເຈົ້າ ຂອງມະນຸດສະໂລກ).
[37]ເລື່ອງນັ້ນທ່ານທັງຫລາຍກໍຮູ້ແລ້ວ ຄືເລື່ອງທີ່ເກີດມີມາຕັ້ງຕົ້ນແຕ່ແຂວງ ຄາລີເລ ໄປຈົນຕະ-
ຫລອດທົ່ວແຂວງ ຢູດາຍ ເມື່ອພາຍຫລັງບັບຕິສະມາທີ່ ໂຢຮັນ ໄດ້ປະກາດນັ້ນ. [38]ຄືເລື່ອງທີ່ ພຣະ-
ເຈົ້າ ໄດ້ຊົງຫົດສົງ ເຢຊູ ໄທ ນາຊາເຣັດ ດ້ວຍ ພຣະວິນຍານບໍລິສຸດ ແລະດ້ວຍລິດທານຸພາບ ພຣະ-
ອົງຈຶ່ງສະເດັດໄປທຸກຫົນທຸກແຫ່ງເຮັດຄຸນງາມຄວາມດີ ແລະຊົງໂຜດບັນດາຜູ້ຖືກມານບຽດບຽນ
ໃຫ້ດີ ເພາະວ່າ ພຣະເຈົ້າ ຊົງສະຖິດຢູ່ກັບພຣະອົງ. [39]ຝ່າຍຂ້າພະເຈົ້າທັງຫລາຍກໍເປັນພະຍານ
ເຖິງການທັງປວງທີ່ພຣະອົງໄດ້ຊົງກະທຳໃນບ້ານເມືອງຂອງຊາວ ຢິວ ແລະ ໃນກຸງ ເຢຣູຊາເລັມ

[ກ]ສະໄໝປັດຈຸບັນ ເຄີຍເວົ້າວ່າ ບ່າຍສາມໂມງ. [ຂ]ເຊີນເບິ່ງ ກຈກ 8:35.

ພຣະອົງນັ້ນເຂົາໄດ້ຂ້າເສຍດ້ວຍແຂວນໄວ້ທີ່ເສົາໄມ້. [40]ພຣະອົງນັ້ນແຫລະ, ພຣະເຈົ້າໄດ້ຊົງ
ບັນດານໃຫ້ເປັນຄືນມາໃນວັນຖ້ວນສາມແລະຊົງບັນດານໃຫ້ພຣະອົງປະກົດແຈ້ງ. [41]ບໍ່ໄດ້ຊົງໃຫ້
ປະກົດແກ່ພົນລະເມືອງທົ່ວໄປ ແຕ່ຊົງປະກົດແກ່ພວກພະຍານຊຶ່ງພຣະເຈົ້າຊົງກຳນົດໄວ້ລ່ວງ
ໜ້າຄືຊົງປະກົດແກ່ພວກຂ້າພະເຈົ້າ ຜູ້ໄດ້ກິນໄດ້ດື່ມດ້ວຍກັນກັບພຣະອົງພາຍຫລັງທີ່ພຣະອົງໄດ້
ຊົງຄືນພຣະຊົນ. [42]ພຣະອົງຊົງສັ່ງໃຫ້ຂ້າພະເຈົ້າທັງຫລາຍປະກາດແກ່ພົນລະເມືອງ ແລະໃຫ້
ເປັນພະຍານວ່າ ແມ່ນພຣະອົງນີ້ແຫລະ, ທີ່ພຣະເຈົ້າໄດ້ຊົງຕັ້ງໄວ້ໃຫ້ເປັນຜູ້ພິພາກສາທັງຄົນ
ເປັນແລະຄົນຕາຍ. [43]ແມ່ນເຖິງເລື່ອງພຣະອົງນີ້ແຫລະ, ຜູ້ປະກາດພຣະທຳທັງຫລາຍໄດ້ເປັນ
ພະຍານວ່າ ທຸກໆ ຄົນທີ່ເຊື່ອວາງໃຈໃນພຣະອົງນັ້ນຈະໄດ້ຮັບຄວາມຍົກຜິດບາບ ເພາະພຣະ-
ນາມຂອງພຣະອົງ.

## ພວກຄົນຕ່າງຊາດໄດ້ຮັບພຣະວິນຍານບໍລິສຸດ

[44]ຂະນະທີ່ເປໂຕຍັງກ່າວດັ່ງນີ້ຢູ່ ພຣະວິນຍານບໍລິສຸດໄດ້ສະເດັດລົງມາເທິງຄົນທັງປວງທີ່
ກຳລັງຟັງພຣະທຳນັ້ນ. [45]ສ່ວນພວກລູກສິດທີ່ເປັນຝ່າຍພິທີຕັດ ທີ່ໄດ້ມາກັບເປໂຕນັ້ນກໍງຶດງໍ້ອັດ-
ສະຈັນໃຈ ເພາະວ່າພຣະເຈົ້າໄດ້ຊົງປະທານພຣະວິນຍານບໍລິສຸດໃຫ້ລົງມາເທິງຄົນຕ່າງຊາດ
ເໝືອນກັນ. [46]ເພາະວ່າເຂົາໄດ້ຍິນຄົນເຫລົ່ານັ້ນປາກພາສາແປກໆ ແລະຍົກຍໍສໍລະເສີນພຣະ-
ເຈົ້າ ຝ່າຍເປໂຕໄດ້ກ່າວວ່າ, [47]“ຄົນເຫລົ່ານີ້ໄດ້ຮັບພຣະວິນຍານບໍລິສຸດຢ່າງດຽວກັນກັບພວກ
ເຮົາ ສັນນັ້ນບໍ່ມີໃຜຕີ້ ຈະຫ້າມເຂົາບໍ່ໃຫ້ຮັບບັບຕິສະມາດ້ວຍນ້ຳ.” [48]ເປໂຕຈິ່ງສັ່ງໃຫ້ເຂົາຮັບ
ບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດ ແລະເຂົາຍັງໄດ້ຂໍໃຫ້ທ່ານພັກຢູ່ກັບເຂົາອີກສອງ
ສາມວັນ.

# ບົດທີ 11

## ເປໂຕລາຍງານຕໍ່ຄຣິສຕະຈັກທີ່ກຸງເຢຣູຊາເລັມ

[1]ອັນໜຶ່ງພວກອັກຄະສາວົກແລະພີ່ນ້ອງທັງຫລາຍທີ່ຢູ່ໃນແຂວງຢູດາຍ ໄດ້ຊາບຂ່າວວ່າພວກ
ຕ່າງຊາດໄດ້ຮັບເອົາພຣະທຳຂອງພຣະເຈົ້າເໝືອນກັນ. [2]ດັ່ງນັ້ນເມື່ອເປໂຕໄດ້ຂຶ້ນເມືອຍັງກຸງ
ເຢຣູຊາເລັມແລ້ວ ພວກທີ່ເປັນຝ່າຍພິທີຕັດຈິ່ງຕິຕຽນທ່ານ. [3]ໂດຍກ່າວວ່າ, “ທ່ານໄດ້ເຂົ້າໄປຫາ
ຄົນພວກບໍ່ໄດ້ຮັບພິທີຕັດ ແລ້ວຮັບປະທານອາຫານກັບເຂົາ.” [4]ແຕ່ເປໂຕໄດ້ຕັ້ງຕົ້ນອະທິບາຍໃຫ້
ເຂົາຟັງເປັນລຳດັບມາວ່າ. [5]“ຝ່າຍຂ້າພະເຈົ້າເມື່ອຢູ່ເມືອງຢົບປາກຳລັງໄຫວ້ວອນຢູ່ ກໍລືມຕົວໄປ
ແລະໄດ້ເຫັນນິມິດ ມີສິ່ງໜຶ່ງກຳລັງລົງມາເໝືອນຜ້າຜືນໃຫຍ່ຜູກໄວ້ທັງສີ່ແຈ ຢ່ອນລົງມາເຖິງ
ຂ້າພະເຈົ້າ. [6]ເມື່ອຂ້າພະເຈົ້າເພ່ງເບິ່ງກໍສັງເກດເຫັນສັດສີ່ຕີນຂອງແຜ່ນດິນໂລກ, ກັບສັດປ່າ,
ສັດໄຕ່ສັດຄານ, ແລະນົກທີ່ບິນໃນອາກາດ. [7]ແລ້ວຂ້າພະເຈົ້າໄດ້ຍິນພຣະສຸລະສຽງບອກຂ້າພະ-
ເຈົ້າວ່າ ‘ເປໂຕເອີຍ, ຈົ່ງລຸກຂຶ້ນແລະຂ້າກິນເສຍ.’ [8]ແຕ່ຂ້າພະເຈົ້າໄດ້ທູນວ່າ, ‘ບໍ່ໄດ້ແທ້, ພຣະ-
ອົງເຈົ້າເອີຍ ດ້ວຍວ່າສິ່ງຊຶ່ງເປັນຂອງຕ້ອງຫ້າມ ຫລືສິ່ງຊອງທີ່ບໍ່ທັນຊຳລະໃຫ້ອາດ ບໍ່ໄດ້ເຂົ້າ
ໃນປາກຂອງຂ້າພຣະອົງຈັກເທື່ອ.’ [9]ແຕ່ມີພຣະສຸລະສຽງຕອບຈາກຟ້າເທື່ອທີສອງວ່າ ‘ສິ່ງທີ່
ພຣະເຈົ້າຊົງຊຳລະແລ້ວ ຝ່າຍທ່ານຢ່າຖືເປັນຂອງຕ້ອງຫ້າມ.’ [10]ການນັ້ນເກີດມາເຖິງສາມເທື່ອ

ແລ້ວສິ່ງທັງໝົດກໍຖືກຮັບຄືນເມືອຟ້າອີກ. [11]ເບິ່ງແມ, ໃນທັນໃດນັ້ນມີຊາຍສາມຄົນມາຢືນຢູ່ໜ້າ
ຕຶກທີ່ພວກຂ້າພະເຈົ້າຢູ່ນັ້ນ ຮັບໃຊ້ມາຈາກເມືອງ ກາຍຊາເຣຍ ມາຫາຂ້າພະເຈົ້າ. [12]ແລ້ວ ພຣະ-
ວິນຍານ ໄດ້ຊົງສັ່ງຂ້າພະເຈົ້າໃຫ້ໄປກັບເຂົາໂດຍບໍ່ລັງເລໃຈ ແລະພີ່ນ້ອງທັງຫົກຄົນນີ້ໄດ້ໄປກັບ
ຂ້າພະເຈົ້າ ພວກຂ້າພະເຈົ້າຈຶ່ງໄດ້ເຂົ້າໄປໃນເຮືອນຂອງທ່ານຜູ້ນັ້ນ. [13]ຜູ້ນັ້ນໄດ້ເລົ່າໃຫ້ພວກຂ້າ-
ພະເຈົ້າຟັງວ່າ ເພິ່ນໄດ້ເຫັນເທວະດາຕົນໜຶ່ງຢືນຢູ່ໃນເຮືອນຂອງຕົນສັ່ງວ່າ ‘ຈົ່ງໃຊ້ຄົນໄປຍັງ
ເມືອງ ຢົບປາ ເຊີນເອົາຊີໂມນ ຜູ້ມີຊື່ວ່າ ເປໂຕ ມາ. [14]ເປໂຕ ນັ້ນຈະກ່າວໃຫ້ທ່ານທັງຫລາຍເປັນ
ຖ້ອຍຄຳ ຊຶ່ງຈະໃຫ້ທ່ານທັງຄອບຄົວໄດ້ລອດພົ້ນ.’ [15]ເມື່ອຂ້າພະເຈົ້າຕັ້ງຕົ້ນກ່າວຂໍ້ຄວາມນັ້ນ
ພຣະວິນຍານບໍລິສຸດ ກໍສະເດັດລົງມາເທິງເຂົາ ເໝືອນໄດ້ສະເດັດລົງມາເທິງພວກເຮົາໃນຕອນ
ຕົ້ນນັ້ນ. [16]ແລ້ວຂ້າພະເຈົ້າໄດ້ລະນຶກເຖິງພຣະທຳຂອງ ພຣະຜູ້ເປັນເຈົ້າ ທີ່ຊົງກ່າວໄວ້ວ່າ, ‘ໂຢ-
ຮັນ ໄດ້ໃຫ້ບັບຕິສະມາດ້ວຍນ້ຳກໍແມ່ນ ແຕ່ຝ່າຍທ່ານທັງຫລາຍຈະຮັບບັບຕິສະມາດ້ວຍ ພຣະວິນ-
ຍານບໍລິສຸດ.’ [17]ເຫດສັນນັ້ນຖ້າ ພຣະເຈົ້າ ໄດ້ຊົງ ໂຜດ ໃຫ້ເຂົາໄດ້ຮັບຂອງພຣະລາຊະທານອັນ
ດຽວກັນກັບພວກເຮົາ ເມື່ອພວກເຮົາໄດ້ເຊື່ອໃນ ພຣະເຢຊູຄຣິດ ເຈົ້າ ຝ່າຍຂ້າພະເຈົ້າເປັນຜູ້ໃດທີ່
ຈະສາມາດຂັດຂວາງ ພຣະເຈົ້າ ໄດ້.” [18]ສ່ວນເຂົາເມື່ອໄດ້ຍິນຄຳນັ້ນກໍພາກັນອ່ອນຍອມແລ້ວໄດ້
ສັນລະເສີນ ພຣະເຈົ້າ ວ່າ, “ຖ້າເປັນດັ່ງນີ້ກໍແມ່ນ ພຣະເຈົ້າ ໄດ້ຊົງ ໂຜດແກ່ຄົນຕ່າງຊາດ ໃຫ້ຖິ້ມ
ໃຈເກົ່າເອົາໃຈໃໝ່ເພື່ອເຂົາຈະໄດ້ຊີວິດເໝືອນກັນ.”

## ຄຣິສຕະຈັກທີ່ເມືອງອັນຕີໂອເຂຍ

[19]ຝ່າຍຄົນທັງຫລາຍທີ່ແຕກກະຈັດກະຈາຍໄປເພາະການທຸກລຳບາກເນື່ອງຈາກຊະເຕຟາໂນ
ກໍພາກັນໄປຍັງເມືອງ ຟອຍນີເກ, ເກາະ ກຸບໂຣ, ແລະເມືອງ ອັນຕີໂອເຂຍ ເຂົາບໍ່ໄດ້ກ່າວພຣະ-
ທຳ ແກ່ຜູ້ໃດນອກຈາກພວກ ຢິວ ຝ່າຍດຽວ. [20]ແຕ່ໃນພວກເຂົາມີບາງຄົນ ເປັນຊາວ ເກາະ ກຸບໂຣ
ແລະຊາວ ກີເຣເນ ເມື່ອມາເຖິງເມືອງ ອັນຕີໂອເຂຍນັ້ນກໍໄດ້ກ່າວກັບຊາວ ກຣີກ ເໝືອນກັນ ໂດຍ
ໄດ້ປະກາດຂ່າວປະເສີດເລື່ອງ ພຣະເຢຊູເຈົ້າ. [21]ແລະລິດອຳນາດຂອງອົງ ພຣະຜູ້ເປັນເຈົ້າກໍສະ-
ຖິດຢູ່ກັບ ເຂົາ ຄົນ ເປັນ ຈຳນວນຫລາຍທີ່ ເຊື່ອກໍ ໄດ້ກັບ ໃຈຕ່າວຄືນມາຫາອົງ ພຣະຜູ້ເປັນເຈົ້າ.
[22]ຂ່າວນັ້ນກໍໄດ້ເລົ່າລືໄປເຖິງຫູຄຣິສຕະຈັກໃນກຸງ ເຢຣູຊາເລັມ ເຂົາຈຶ່ງໃຊ້ ບາຣະນາບາ ໄປຍັງ
ເມືອງ ອັນຕີໂອເຂຍ. [23]ເມື່ອທ່ານໄດ້ມາເຖິງແລ້ວກໍໄດ້ເຫັນພຣະຄຸນທີ່ ພຣະເຈົ້າ ຊົງ ໂຜດ ກໍປິຕິ-
ຍິນດີໄດ້ຕັກເຕືອນຄົນເຫລົ່ານັ້ນ ໃຫ້ຕັ້ງໃຈໝັ້ນຄົງຕິດສະໜິດຢູ່ກັບອົງ ພຣະຜູ້ເປັນເຈົ້າ. [24]ເພາະ
ທ່ານຜູ້ນີ້ ເປັນຄົນດີ ເຕັມໄປດ້ວຍ ພຣະວິນຍານບໍລິສຸດ ແລະຄວາມເຊື່ອ ແລະມີຄົນຈຳນວນ
ຫລາຍສົມຄວນໄດ້ເພີ່ມເຕີມເຂົ້າມາຢູ່ຝ່າຍອົງ ພຣະຜູ້ເປັນເຈົ້າ. [25]ຝ່າຍ ບາຣະນາບາ ຈຶ່ງໄປເມືອງ
ຕາໂຊ ເພື່ອຊອກຫາ ໂຊໂລ. [26]ເມື່ອພົບ ແລ້ວກໍພາມາຍັງ ເມືອງ ອັນຕີໂອເຂຍ ທ່ານທັງສອງໄດ້
ເຄີຍປະຊຸມກັນກັບຄຣິສຕະຈັກຕະຫລອດປີໜຶ່ງ ຈຶ່ງໄດ້ສັ່ງສອນຫລາຍຄົນສົມຄວນ ໃນເມືອງ
ອັນຕີໂອເຂຍ ນີ້ພວກລູກສິດໄດ້ຖືກເອີ້ນວ່າ ຄຣິສະຕຽນ ເປັນເທື່ອທຳອິດ.

[27]ຄາວນັ້ນມີພວກຜູ້ປະກາດພຣະທຳລົງໄປຈາກກຸງ ເຢຣູຊາເລັມ ມາຍັງ ເມືອງ ອັນຕີໂອເຂຍ.
[28]ມີຜູ້ໜຶ່ງ ໃນພວກນັ້ນຊື່ ອາຄະໂບ ໄດ້ຢືນຂຶ້ນສະແດງ ໂດຍ ພຣະວິນຍານ ວ່າ ໃກ້ຈະບັງເກີດ
ການອຶດຢາກຢ່າງໃຫຍ່ທົ່ວແຜ່ນດິນໂລກ ການອຶດຢາກນັ້ນໄດ້ບັງເກີດຂຶ້ນໃນລາຊະສະໄໝຈັກ-

ກະພັດ ກະໂລດີໂອ. [29]ສ່ວນພວກສິດທຸກຄົນມີເຈດຕະນາບໍລິຈາກຕາມກຳລັງ ຝາກໄປຊ່ອຍບັນ-
ເທົາທຸກພວກພີ່ນ້ອງທີ່ຢູ່ໃນ ແຂວງ ຢູດາຍ. [30]ເຂົາໄດ້ເຮັດດັ່ງນັ້ນ ແລະໄດ້ໃຫ້ ບາຣະນາບາ ກັບ
ໂຊໂລ ນຳໄປໃຫ້ພວກເຖົ້າແກ່.

# ບົດທີ 12

## ຢາໂກໂບຖືກຂ້າ ເປໂຕຖືກຄຸກ

[1]ໃນ ລະຫວ່າງ ນັ້ນ ກະສັດ ເຮໂຣດ ໄດ້ ຢຽດ ພຣະຫັດ ອອກ ທຳຮ້າຍ ລາງ ຄົນ ໃນ ຄຣິສຕະຈັກ.
[2]ທ່ານ ໄດ້ຂ້າ ຢາໂກໂບ ອ້າຍຂອງ ໂຢຮັນ ດ້ວຍດາບ. [3]ເມື່ອທ່ານ ເຫັນວ່າການນີ້ ເປັນທີ່ຊອບໃຈ
ພວກ ຢິວ ທ່ານກໍເລີຍຈັບ ເປໂຕ ເໝືອນກັນ (ຄາວນັ້ນ ແມ່ນ ເທດສະການກິນ ເຂົ້າຈີ່ບໍ່ມີເຊື້ອ).
[4]ເມື່ອຈັບ ເປໂຕ ແລ້ວກໍຂັງຄຸກໄວ້ ມອບໃຫ້ທະຫານສີ່ໝູ່ ໝູ່ລະສີ່ຄົນ ຄຸມຮັກສາຢູ່ໃນ ໂດຍໝາຍ
ໃຈວ່າ ເມື່ອສິ້ນເທດສະການປັດສະຄາແລ້ວຈະໄດ້ນຳອອກໃຫ້ພົນລະເມືອງ. [5]ເຫດສັນນັ້ນ ເປໂຕ ຈຶ່ງ
ຖືກຂັງຄຸກຢູ່ ແຕ່ຝ່າຍຄຣິສຕະຈັກໄດ້ອ້ອນວອນ ພຣະເຈົ້າ ເພື່ອເພິ່ນດ້ວຍໃຈຮ້ອນຮົນ.

## ຊົງຊ່ອຍເປໂຕໃຫ້ພົ້ນຈາກຄຸກ

[6]ໃນກາງຄືນນັ້ນກ່ອນວັນທີ່ກະສັດ ເຮໂຣດ ຈະນຳ ເປໂຕ ອອກມາ ເປໂຕ ກໍນອນຫລັບຢູ່ຫວ່າງ
ກາງທະຫານສອງຄົນ ມີໂສ້ສອງເສັ້ນລ່າມໄວ້ ແລະຕໍ່ໜ້າປະຕູມີທະຫານຍາມເຝົ້າຄຸກຢູ່. [7]ເບິ່ງ
ແມ, ມີເທວະດາຕົນໜຶ່ງຂອງອົງ ພຣະຜູ້ເປັນເຈົ້າ ໄດ້ມາປະກົດຢືນຢູ່ ແລະມີແສງສະຫວ່າງສ່ອງ
ເຂົ້າ ໃນຫ້ອງຄຸກ ເທວະດານັ້ນໄດ້ຕົບທີ່ຂ້າງຂອງ ເປໂຕ ໃຫ້ຕື່ນ ແລ້ວ ເວົ້າວ່າ, “ລຸກຂຶ້ນໄວໆ”
ແລະ ໂສ້ຈະຫລຸດອອກຈາກມືຂອງ ເພິ່ນ. [8]ເທວະດາຈຶ່ງບອກ ເປໂຕ ວ່າ, “ຈົ່ງຮັດແອວແລະໃສ່
ເກີບ” ແລະ ເປໂຕ ກໍເຮັດຕາມ ເທວະດາຈຶ່ງບອກອີກວ່າ, “ຈົ່ງຫົ່ມເສື້ອແລະຕາມເຮົາໄປ.” [9]ເພິ່ນ
ຈຶ່ງຕາມອອກໄປ ແລະບໍ່ຮູ້ວ່າການທີ່ເທວະດາເຮັດນັ້ນເປັນຄວາມຈິງ ແຕ່ຄຶດວ່າຕົນກຳລັງເຫັນ
ນິມິດ. [10]ເມື່ອອອກໄປພົ້ນທະຫານຍາມຊັ້ນທີໜຶ່ງແລະທີສອງແລ້ວ ເຂົາກໍມາເຖິງປະຕູເຫລັກທີ່
ເຂົ້າໄປໃນເມືອງ ປະຕູນັ້ນກໍໄຂເອງໃຫ້ເຂົາ ເຂົາຈຶ່ງອອກຍ່າງຕາມຖະໜົນເສັ້ນໜຶ່ງ ແລະໃນ
ທັນໃດນັ້ນເທວະດາກໍໄດ້ຈາກ ເປໂຕ ໄປ. [11]ຄັນ ເປໂຕ ຮູ້ສຶກຕົວແລ້ວຈຶ່ງເວົ້າວ່າ, “ດຽວນີ້ເຮົາຮູ້ແນ່
ວ່າອົງ ພຣະຜູ້ເປັນເຈົ້າ ໄດ້ຊົງໃຊ້ເທວະດາຂອງພຣະອົງມາຊ່ອຍເຮົາ ໃຫ້ພົ້ນຈາກມືຂອງ ເຮໂຣດ
ແລະພົ້ນຈາກການມຸ່ງຮ້າຍຂອງພວກຢິວ.”

[12]ເມື່ອ ເປໂຕ ຄຶດໄດ້ດັ່ງນີ້ແລ້ວກໍໄປເຖິງເຮືອນຂອງ ມາຣີອາ ແມ່ຂອງ ໂຢຮັນ ຜູ້ມີຊື່ອີກວ່າ ມາ-
ຣະໂກ ທີ່ນັ້ນມີຫລາຍຄົນໄດ້ຊຸມນຸມກັນອ້ອນວອນຢູ່. [13]ເມື່ອ ເປໂຕ ເຄາະປະຕູເຮືອນ ມີຍິງໃຊ້
ຄົນໜຶ່ງຊື່ ໂຣເດ ມາຟັງ. [14]ເມື່ອຈື່ໄດ້ວ່າເປັນສຽງຂອງ ເປໂຕ ຍິງນັ້ນກໍຍັງບໍ່ໄຂປະຕູໃຫ້ເພາະ
ຄວາມຍິນດີ ແຕ່ໄດ້ແລ່ນເຂົ້າໄປບອກຂ່າວວ່າ ເປໂຕ ຢືນຢູ່ຕໍ່ໜ້າເຮືອນ. [15]ເຂົາໄດ້ຕອບວ່າ, “ມຶງ
ເປັນບ້າ” ແຕ່ຍິງນັ້ນຢືນຢັນວ່າເປັນຢ່າງນັ້ນແທ້ ແລ້ວເຂົາຈຶ່ງວ່າ, “ຈະແມ່ນເທວະດາປະຈຳຕົວ
ເປໂຕ.” [16]ແຕ່ ເປໂຕ ຍັງເຄາະປະຕູຢູ່ ເມື່ອເຂົາໄຂແລ້ວກໍເຫັນທ່ານຈຶ່ງງຶດງໍ້ອັດສະຈັນໃຈ. [17]ແຕ່
ເປໂຕ ໄດ້ກວັກມືໃຫ້ພວກເຂົາມິດ ແລ້ວເລົ່າໃຫ້ເຂົາຟັງເຖິງເລື່ອງທີ່ອົງ ພຣະຜູ້ເປັນເຈົ້າ ໄດ້ຊົງພາ
ຕົນອອກຈາກຄຸກຢ່າງໃດ ແລ້ວທ່ານໄດ້ສັ່ງວ່າ, “ຈົ່ງບອກເລື່ອງນີ້ແກ່ຢາໂກໂບກັບພວກພີ່ນ້ອງ

ໃຫ້ຊາບ" ເປໂຕ ຈຶ່ງອອກໄປບ່ອນອື່ນເສຍ.
[18]ຄັນຮຸ່ງເຊົ້າມາກໍເກີດການສັບສົນວຸ້ນວາຍບໍ່ໜ້ອຍໃນຖ້າມກາງພວກທະຫານວ່າ, "ເກີດເປັນ
ຢ່າງໃດໜໍກັບ ເປໂຕ." [19]ເມື່ອ ເຮໂຣດ ຊອກຫາຕົວ ເປໂຕ ບໍ່ພົບຈຶ່ງໄດ້ໄຕ່ຖາມພວກທະຫານຈຶ່ງສັ່ງ
ໃຫ້ເອົາເຂົາໄປຂ້າເສຍ ແລ້ວ ເຮໂຣດ ໄດ້ຈາກແຂວງ ຢູດາຍ ລົງໄປອາໃສຢູ່ໃນ ເມືອງ ກາຍຊາ-
ເຣຍ.

## ເຮໂຣດເຖິງມໍລະນະກໍາ

[20]ອັນໜຶ່ງ ເຮໂຣດ ມີຄວາມເຄືອງຄຽດຕໍ່ຊາວ ຕີເຣ ແລະຊາວຊີໂດນ ແຕ່ຊາວເມືອງນັ້ນໄດ້ພ້ອມ
ກັນມາເຝົ້າເພິ່ນ ເມື່ອເຂົາຕິດຕໍ່ເອົາໃຈ ບລາຊະໂຕ ກົມມະວັງຂອງກະສັດໄດ້ແລ້ວ ເຂົາກໍພາກັນ
ໄປຂໍເປັນມິດໄມຕີກັບກະສັດ ເພາະວ່າເມືອງຂອງເຂົາຕ້ອງອາໃສອາຫານລ້ຽງຊີບຈາກແຜ່ນດິນ
ຂອງກະສັດ. [21]ເມື່ອເຖິງວັນນັດ ເຮໂຣດ ຊົງເຄື່ອງກະສັດ ຈຶ່ງປະທັບລາຊະບັນລັງ ແລ້ວມີລາ-
ຊະດໍາລັດແກ່ເຂົາ. [22]ຝ່າຍປະຊາຊົນກໍຮ້ອງຂຶ້ນວ່າ, "ເປັນສຽງຂອງ ພຣະເຈົ້າ ບໍ່ແມ່ນສຽງຂອງ
ມະນຸດ." [23]ໃນທັນໃດນັ້ນມີເທວະດາຕົນໜຶ່ງຂອງອົງ ພຣະຜູ້ເປັນເຈົ້າ ໄດ້ບັນດານ ໃຫ້ທ່ານໄດ້
ເກີດພະຍາດຮ້າຍ ເພາະ ເພິ່ນບໍ່ໄດ້ຖວາຍພຣະກຽດແດ່ ພຣະເຈົ້າ ແລ້ວເກີດມີຕົວໜອນມາກັດກິນ
ຮ່າງກາຍຂອງທ່ານຈົນສິ້ນພຣະຊົນ. [24]ສ່ວນພຣະທໍາຂອງ ພຣະເຈົ້າ ກໍແຜ່ຈະເລີນທະວີຂຶ້ນ.
[25]ຝ່າຍ ບາຣະນາບາ ກັບ ໂຊໂລ ເມື່ອສໍາເລັດການປະຕິບັດຂອງຕົນແລ້ວ ຈຶ່ງໄດ້ຈາກກຸງ ເຢຣູ-
ຊາເລັມ ກັບເມືອ ພາເອົາ ໂຢຮັນ ຜູ້ມີຊື່ອີກວ່າ ມາຣະໂກ ໄປນໍາ.

# ບົດທີ 13

## ເລື່ອງບາຣະນາບາແລະໂຊໂລ

[1]ຄາວນັ້ນຄຣິສຕະຈັກທີ່ຢູ່ໃນ ເມືອງ ອັນຕີໂອເຂຍ ມີລາງຄົນ ເປັນຜູ້ປະກາດພຣະທໍາແລະອາ-
ຈານ ຄື ບາຣະນາບາ, ຊີເມໂອນ ຜູ້ເອີ້ນວ່າ ນີເຄັນ, ກັບ ລູກີໂອ ໄທເມືອງ ກີເຣເນ, ມານາເອນ ຜູ້
ເປັນເພື່ອນສະໜິດ[ກ] ກັບ ເຮໂຣດ ຜູ້ເປັນເຈົ້າເມືອງ, ແລະ ໂຊໂລ. [2]ເມື່ອເຂົາກໍາລັງປະຕິບັດນະ-
ມັດສະການ ອົງ ພຣະຜູ້ເປັນເຈົ້າ ແລະ ຖືສິນອົດອາຫານຢູ່ ພຣະວິນຍານບໍລິສຸດ ໄດ້ຊົງສັ່ງວ່າ,
"ຈົ່ງ ຄັດ ເອົາ ບາຣະນາບາ ກັບ ໂຊໂລ ຕັ້ງ ໄວ້ໃຫ້ ເຮົາ ສໍາລັບ ການ ທີ່ ເຮົາ ເອີ້ນ ໃຫ້ ເຂົາ ເຮັດນັ້ນ."
[3]ເມື່ອຖືສິນອົດອາຫານ ແລະ ໄຫວ້ວອນ ແລ້ວກໍໄດ້ວາງມືໃສ່ ບາຣະນາບາ ແລະ ໂຊໂລ ຈຶ່ງໃຫ້ເຂົາ
ອອກໄປ.

## ການປະກາດທີ່ເກາະກຸບໂຣ

[4]ເຫດສັນນັ້ນທ່ານທັງສອງຜູ້ໄດ້ຮັບໃຊ້ໄປຈາກ ພຣະວິນຍານບໍລິສຸດ ກໍໄດ້ລົງໄປເຖິງ ເມືອງ
ແຊລູເກຍ ແລະຈາກທີ່ນັ້ນກໍໄດ້ລົງ ເຮືອສະເພົາ ເດີນທາງ ໄປ ເຖິງ ເກາະ ກຸບໂຣ. [5]ຄັນມາເຖິງ
ເມືອງ ຊາລາມີ ແລ້ວ ທ່ານທັງສອງໄດ້ປະກາດພຣະທໍາຂອງ ພຣະເຈົ້າ ໃນ ໂຮງທໍາມະເທດສະໜາ
ຂອງຊາວ ຢິວ ແລະເຂົາມີ ໂຢຮັນ ເປັນຜູ້ປະຕິບັດ. [6]ເມື່ອໄດ້ຜ່ານຕະຫລອດທົ່ວເກາະນັ້ນໄປເຖິງ
ເມືອງ ປາໂຟ ແລ້ວ ກໍໄດ້ມາພົບຊາຍຄົນໜຶ່ງເປັນໝໍເວດມົນ, ເປັນໝໍທໍານວາຍປອມ, ເປັນຄົນ

[ກ]ຕາມພາສາເດີມອາດຈະເວົ້າ "ຜູ້ມີແມ່ນົມຜູ້ດຽວກັນ..."

ຊາດ ຢິວ ຊື່ ບາຣະເຢຊູ. [7]ຄົນນີ້ຢູ່ກັບຜູ້ປົກຄອງຊື່ ເຊຄີໂອ ໂປໂລ ເປັນຜູ້ສະຫລຽວສະຫລາດ
ທ່ານຜູ້ນັ້ນໄດ້ເອີ້ນເອົາ ບາຣະນາບາ ກັບ ໂຊໂລ ແລະປາດຖະໜາຈະຟັງພຣະທຳຂອງ ພຣະເຈົ້າ.
[8]ແຕ່ ເອລີມາ ໝໍເວດມົນນັ້ນ (ຊື່ຂອງ ເພິ່ນມີຄວາມໝາຍດັ່ງນັ້ນ) ໄດ້ຕໍ່ຕ້ານ ບາຣະນາບາ ແລະ
ໂຊໂລ ໂດຍພະຍາຍາມຈະ ແຍກຜູ້ປົກຄອງນັ້ນໃຫ້ໜີຈາກຄວາມເຊື່ອ. [9]ແຕ່ ໂຊໂລ ຜູ້ມີຊື່ອີກວ່າ
ໂປໂລ ເຕັມໄປດ້ວຍ ພຣະວິນຍານບໍລິສຸດ ໄດ້ເພ່ງເບິ່ງ ເອລີມາ. [10]ແລ້ວເວົ້າວ່າ, “ໂອ ລູກພະ-
ຍາມານ ເອີຍ, ຜູ້ເປັນສັດຕູຂອງບັນດາຄວາມຊອບທຳ ຕົວເຕັມໄປດ້ວຍອຸບາຍແລະການຊົ່ວຊ້າ
ທຸກຢ່າງ ຕົວ ຈະ ບໍ່ ເຊົາ ພະຍາຍາມ ເຮັດ ທົນທາງ ຊື່ ຂອງ ພຣະຜູ້ເປັນເຈົ້າ ໃຫ້ຄົດ ໂຄ້ງ ໄປ ຫລື.
[11]ເບິ່ງແມ, ບັດນີ້ພຣະຫັດຂອງອົງ ພຣະຜູ້ເປັນເຈົ້າ ກໍລົງຢູ່ເທິງຕົວ ຕົວຈະຕາບອດບໍ່ເຫັນຕາເວັນ
ຈົນ ເຖິງ ເວລາກຳນົດ” ໃນທັນໃດນັ້ນຄວາມມືດມົວໄດ້ຕົກໃສ່ ເອລີມາ ເອລີມາກໍຍ່າງງົມໄປມາ
ຊອກຫາຄົນ ເພື່ອຈູງມືຕົນ. [12]ເມື່ອຜູ້ປົກຄອງໄດ້ເຫັນ ເຫດການທີ່ເກີດຂຶ້ນນັ້ນກໍໄດ້ເຊື່ອ ແລະອັດ-
ສະຈັນໃຈ ເພາະ ໂອວາດຄຳສອນຂອງອົງ ພຣະຜູ້ເປັນເຈົ້າ.

## ການປະກາດທີ່ເມືອງອັນຕີໂອເຂຍໃນປີຊີເດຍ

[13]ຝ່າຍ ໂປໂລ ກັບ ພວກ ຂອງ ທ່ານ ໄດ້ ລົງ ເຮືອ ສະເພົາ ເດີນທາງ ໄປ ຈາກ ເມືອງ ປາໂຟ ໄປ ຍັງ
ເມືອງ ເປເຄ ໃນ ແຂວງ ປຳຟີເລຍ ສ່ວນ ໂຢຮັນ ໄດ້ປະ ເຂົາ ໄວ້ແລ້ວກັບ ເມືອຍັງກຸງ ເຢຣູຊາເລັມ.
[14]ແຕ່ພວກນັ້ນໄດ້ເດີນທາງຕໍ່ໄປຈາກເມືອງ ເປເຄ ມາເຖິງເມືອງ ອັນຕີໂອເຂຍ ໃນ ແຂວງ ປີຊີເດຍ
ແລະ ໃນວັນ ຊະບາໂຕ ເຂົາໄດ້ເຂົ້າໄປໃນ ໂຮງທຳມະເທດສະໜາແລະນັ່ງລົງ. [15]ເມື່ອອ່ານພຣະ-
ບັນຍັດແລະໜັງສືຂອງຜູ້ປະກາດພຣະທຳແລ້ວພວກຜູ້ປົກຄອງໂຮງທຳໄດ້ໃຊ້ຄົນໄປບອກ ບາຣະ-
ນາບາ ແລະ ໂປໂລ ວ່າ, “ພີ່ນ້ອງເອີຍ, ຖ້າພວກທ່ານມີຄຳເຕືອນສະຕິປະການໃດສຳລັບພົນລະ-
ເມືອງ ເຊີນກ່າວໄປ.” [16]ຝ່າຍ ໂປໂລ ໄດ້ຢືນຂຶ້ນກວັກມືແລ້ວກ່າວວ່າ,

“ພວກທ່ານທີ່ເປັນຊົນຊາດ ອິສຣາເອນ ແລະທ່ານທັງຫລາຍທີ່ຢຳເກງ ພຣະເຈົ້າ
ເອີຍ, ເຊີນຟັງເທີນ. [17]ພຣະເຈົ້າ ຂອງພົນລະເມືອງ ອິສຣາເອນ ນີ້ໄດ້ຊົງເລືອກ
ບັນພະບຸລຸດຂອງເຮົາໄວ້ ແລະໄດ້ໃຫ້ເຂົາຈະເລີນມີກຽດຂຶ້ນ ເມື່ອຍັງເປັນແຂກ-
ເມືອງຢູ່ແຜ່ນດິນ ເອຢິບ ແລ້ວໄດ້ຊົງນຳເຂົາອອກຈາກແຜ່ນດິນນັ້ນ ດ້ວຍພຣະ-
ຫັດອັນຊົງລິດອັນສູງ. [18]ແລ້ວ ພຣະເຈົ້າ ໄດ້ຊົງອົດທົນຕໍ່ການປະຕິບັດຂອງ
ເຂົາ[ກ] ໃນປ່າປະມານສີ່ສິບປີ. [19]ເມື່ອພຣະອົງໄດ້ຊົງລ້າງຜານຊົນເຈັດຊາດໃນ
ແຜ່ນດິນ ການາອານ ແລ້ວກໍຊົງຍົກແຜ່ນດິນຂອງຊາດເຫລົ່ານັ້ນ ໃຫ້ເປັນມໍລະ-
ດົກແກ່ບັນພະບຸລຸດຂອງເຮົາ. [20]ປະມານສີ່ຮ້ອຍຫ້າສິບປີພາຍຫລັງນັ້ນ ພຣະ-
ອົງໄດ້ຊົງປະທານພວກຜູ້ຕັດສິນໃຫ້ປົກຄອງເຂົາ ຈົນເຖິງຄາວຂອງຊາມູເອນຜູ້
ປະກາດພຣະທຳ. [21]ຄາວນັ້ນເຂົາໄດ້ຂໍໃຫ້ມີກະສັດ ພຣະເຈົ້າ ຈຶ່ງຊົງປະທານ
ຊາອູນ ບຸດຂອງ ກີເຊ ຈາກຕະກຸນ ເບັນຢາມິນ ໃຫ້ເປັນກະສັດຂອງ ເຂົາຄົບສີ່ສິບ
ປີ. [22]ເມື່ອຊົງຖອດ ຊາອູນ ແລ້ວ ພຣະອົງໄດ້ຊົງຕັ້ງ ດາວິດ ຂຶ້ນເປັນກະສັດຂອງ
ເຂົາ ແລະຊົງເປັນພະຍານກ່າວເຖິງເລື່ອງ ດາວິດ ນີ້ວ່າ ‘ເຮົາໄດ້ພົບ ດາວິດ ບຸດ

[ກ]ສຳເນົາສະບັບບາງສະບັບມີຂໍ້ຄວາມວ່າ “ບຳລຸງລ້ຽງເຂົາ” ແທນທີ່ຈະວ່າ “ອົດທົນ... ເຂົາ.”

ຂອງ ເຢຊີ ເປັນຄົນທີ່ຖືກໃຈເຮົາ ເປັນຜູ້ທີ່ຈະເຮັດຕາມຄວາມປະສົງຂອງເຮົາທຸກ
ປະການ.' 23ພຣະເຈົ້າ ໄດ້ຊົງນຳເອົາພຣະຜູ້ໂຜດໃຫ້ພົ້ນ ຄື ພຣະເຢຊູ ອອກມາ
ຈາກເຊື້ອສາຍຂອງ ດາວິດ ນີ້ ໃຫ້ແກ່ຊົນຊາດ ອິສຣາເອນ ຕາມພຣະສັນຍາຂອງ
ພຣະອົງ. 24ກ່ອນທີ່ ພຣະເຢຊູ ສະເດັດມາປະກົດ ໂຢຮັນ ໄດ້ປະກາດບັບຕິສະ-
ມາອັນກ່ຽວກັບການຖິ້ມໃຈເກົ່າເອົາໃຈໃໝ່ ໃຫ້ແກ່ພົນລະເມືອງ ອິສຣາເອນ ທົ່ວ
ໄປ. 25ເມື່ອ ໂຢຮັນ ປະຕິບັດໜ້າທີ່ຂອງຕົນ ໃກ້ຈະສຳເລັດ ທ່ານ ໄດ້ກ່າວວ່າ
'ທ່ານທັງຫລາຍ ຄຶດ ເຫັນວ່າ ເຮົາຄືຜູ້ໃດ ເຮົາບໍ່ ແມ່ນຕົນນັ້ນ ແທ້ ແຕ່ ເບິ່ງ ແມ,
ພາຍຫລັງ ເຮົາຈະ ມີຄົນໜຶ່ງມາ ຊຶ່ງ ເຮົາຈະ ແກ້ເກີບ ຈາກຕີນ ຂອງທ່ານກໍບໍ່ສົມ-
ຄວນ.' 26"ທ່ານ ແລະພີ່ນ້ອງທັງຫລາຍຜູ້ເປັນ ເຊື້ອຊາດຂອງ ອັບຣາຮາມ ແລະ
ຄົນທັງຫລາຍ ໃນພວກທ່ານທີ່ຢຳເກງ ພຣະເຈົ້າ ເອີຍ ຂ່າວສານເລື່ອງຄວາມລອດ
ພົ້ນນີ້ໄດ້ຊົງຝາກມາເຖິງພວກເຮົານີ້ເອງ. 27ຝ່າຍຊາວກຸງ ເຢຣູຊາເລັມ ກັບພວກ
ຜູ້ ປົກຄອງ ບໍ່ ໄດ້ ຮູ້ຈັກ ພຣະອົງ ແລະ ບໍ່ ໄດ້ ເຂົ້າໃຈ ຖ້ອຍ ຄຳ ຂອງ ພວກ ຜູ້ ປະກາດ
ພຣະທຳ ທີ່ ເຂົາ ເຄີຍ ໄດ້ອ່ານທຸກວັນ ຊະບາໂຕ ຈຶ່ງ ເຮັດ ໃຫ້ສຳເລັດຕາມຖ້ອຍຄຳ
ເຫລົ່ານັ້ນດ້ວຍການພິພາກສາລົງ ໂທດພຣະອົງ. 28ເຖິງແມ່ນເຂົາບໍ່ໄດ້ພົບຄວາມ
ຜິດປະການ ໃດ ໃນພຣະອົງທີ່ຄວນ ຈະ ໃຫ້ຕາຍ ເຂົາຍັງຂໍ ປີລາດ ໃຫ້ຂ້າພຣະອົງ
ເສຍ. 29ເມື່ອໄດ້ເຮັດທຸກຢ່າງໃຫ້ສຳເລັດຕາມພຣະຄຳພີຂຽນໄວ້ເຖິງເລື່ອງພຣະ-
ອົງແລ້ວ ເຂົາໄດ້ອັນເຊີນພຣະສົບຂອງພຣະອົງລົງຈາກເສົາໄມ້ນັ້ນ ໄປບັນຈຸໄວ້
ໃນ ອຸບ ໂມງ. 30ແຕ່ ພຣະເຈົ້າ ໄດ້ ຊົງ ບັນດານ ໃຫ້ ພຣະອົງ ຊົງ ຄືນ ພຣະຊົນ.
31ໃນລະຫວ່າງຫລາຍວັນພຣະອົງໄດ້ຊົງປະກົດແກ່ຄົນທັງຫລາຍ ທີ່ຕາມພຣະອົງ
ມາຈາກ ແຂວງ ຄາລິເລ ຂຶ້ນມາຍັງກຸງ ເຢຣູຊາເລັມ ບັດນີ້ຄົນນັ້ນ ແຫລະ, ເປັນ
ພະຍານຝ່າຍພຣະອົງໃຫ້ແກ່ພົນລະເມືອງ. 32ຝ່າຍພວກເຮົາໄດ້ນຳຂ່າວປະເສີດ
ນີ້ມາແຈ້ງແກ່ທ່ານທັງຫລາຍວ່າ ພຣະສັນຍາຊຶ່ງຊົງປະທານແກ່ບັນພະບຸລຸດຂອງ
ພວກເຮົາ. 33ພຣະເຈົ້າ ໄດ້ຊົງບັນດານໃຫ້ພຣະສັນຍານັ້ນສຳເລັດແລ້ວແກ່ເຮົາຜູ້
ເປັນລູກຫລານຂອງເຂົາ ຄື ໃນການທີ່ພຣະອົງຊົງບັນດານ ໃຫ້ ພຣະເຢຊູ ຊົງຄືນ
ພຣະຊົນ ເໝືອນ ມີຄຳຂຽນ ໄວ້ ໃນພຣະທຳ ເພງສັນລະເສີນ ບົດທີສອງ[ກ] ວ່າ,
'ທ່ານເປັນບຸດຂອງເຮົາ ຝ່າຍເຮົາໃນວັນນີ້ເຮົາໃຫ້ກຳເນີດທ່ານ.' 34ດ້ວຍການທີ່
ພຣະເຈົ້າ ໄດ້ຊົງບັນດານ ໃຫ້ພຣະອົງ ຊົງ ຄືນ ພຣະຊົນ ບໍ່ ໃຫ້ຫລົບ ສູ່ຄວາມ ເນົ່າ
ເປື່ອຍອີກຈັກເທື່ອນັ້ນ ພຣະອົງໄດ້ຊົງກ່າວດັ່ງນີ້ວ່າ, 'ເຮົາຈະໃຫ້ສິ່ງບໍລິສຸດໝັ້ນ-
ຄົງ ແກ່ທ່ານທັງຫລາຍ ຊຶ່ງໄດ້ສັນຍາໄວ້ກັບ ດາວິດ ແລ້ວ.' 35ເຫດສັນນັ້ນພຣະ-
ອົງ ໄດ້ຊົງກ່າວ ໄວ້ ໃນ ບົດ ອື່ນ ເໝືອນກັນວ່າ, 'ພຣະອົງ ຈະ ບໍ່ ໃຫ້ຜູ້ບໍລິສຸດ ຂອງ
ພຣະອົງ ປະສົບຄວາມເນົ່າເປື່ອຍ.' 36ຝ່າຍ ດາວິດ, ເມື່ອໄດ້ປະຕິບັດ ໃນຄາວ
ອາຍຸ ຂອງ ທ່ານ ຕາມ ພຣະປະສົງ ຂອງ ພຣະເຈົ້າ ແລ້ວ ໄດ້ ລ່ວງ ລັບ ໄປ ຮ່ວມ ຢູ່ ກັບ

[ກ]ພາສາເດີມວ່າ "ບົດທີໜຶ່ງ" ອັນນີ້ກໍເພາະວ່າສະໄໝນັ້ນເຂົາຖືເອົາບົດທີໜຶ່ງກັບບົດທີສອງເໝືອນເປັນບົດດຽວ.

ບັນພະບຸລຸດຂອງທ່ານ ກໍໄດ້ປະສົບຄວາມເນົ່າເປື່ອຍ. 37ແຕ່ພຣະອົງຜູ້ຊຶ່ງ
ພຣະເຈົ້າ ໄດ້ຊົງບັນດານໃຫ້ຄືນພຣະຊົນນັ້ນ ກໍບໍ່ໄດ້ປະສົບຄວາມເນົ່າເປື່ອຍ.
38ເຫດສັນນີ້ພີ່ນ້ອງທັງຫລາຍເອີຍ, ຈົ່ງເຂົ້າໃຈວ່າ, ໂດຍພຣະອົງນັ້ນແຫລະ, ຈຶ່ງ
ໄດ້ປະກາດການຍົກຜິດບາບແກ່ທ່ານທັງຫລາຍ. 39ແລະໂດຍພຣະອົງນັ້ນທຸກ
ຄົນທີ່ເຊື່ອຈະໄດ້ຖືກຊົງຊໍາລະທຸກຢ່າງ ຊຶ່ງຈະຊໍາລະບໍ່ໄດ້ຕາມພຣະບັນຍັດຂອງ
ໂມເຊ. 40ເຫດສັນນັ້ນຈົ່ງລະວັງໃຫ້ດີ ຢ້ານວ່າຄໍາທີ່ຊົງກ່າວໄວ້ດ້ວຍຜູ້ປະກາດ
ພຣະທໍານັ້ນ ຈະໄດ້ມາຖືກພວກທ່ານ, 41ຄືວ່າ,

'ເບິ່ງແມ, ສູຜູ້ໝິ່ນປະໝາດເຮີຍ
ຈົ່ງປະຫລາດໃຈແລະຈິບຫາຍເສຍ
ດ້ວຍວ່າຝ່າຍເຮົາໄດ້ກະທໍາການໃນສະໄໝຂອງສູ
ເປັນການທີ່ສູຈະບໍ່ເຊື່ອເປັນແນ່
ແມ່ນວ່າມີຜູ້ມາເລົ່າໃຫ້ຟັງແລ້ວກໍຕາມ'."

42ເມື່ອທ່ານທັງສອງກໍາລັງຍ່າງອອກໄປ ເຂົາກໍອ້ອນວອນຂໍໃຫ້ທ່ານເລົ່າຂໍ້ຄວາມທັງຫລາຍນີ້
ໃຫ້ເຂົາຟັງອີກໃນວັນຊະບາໂຕໜ້າ. 43ເມື່ອທີ່ປະຊຸມເລີກແລ້ວມີຄົນຢິວ ແລະຄົນທີ່ເຂົ້າຮີດຄອງ
ຢິວຜູ້ຢໍາເກງພຣະເຈົ້າ ໄດ້ຕິດຕາມໂປໂລ ແລະ ບາຣະນາບາ ໄປທ່ານທັງສອງຈຶ່ງກ່າວຕັກເຕືອນ
ໃຫ້ເຂົາຕັ້ງໝັ້ນຄົງຢູ່ໃນພຣະຄຸນຂອງພຣະເຈົ້າ.

44ຄັນເຖິງວັນຊະບາໂຕໜ້າ ຄົນເກືອບໝົດທັງເມືອງໄດ້ມາປະຊຸມກັນຟັງພຣະທໍາຂອງພຣະ-
ເຈົ້າ. 45ແຕ່ເມື່ອພວກຢິວເຫັນຄົນຫລວງຫລາຍດັ່ງນັ້ນ ກໍເຕັມໄປດ້ວຍຄວາມເຫິງສາ ຈຶ່ງຄັດ-
ຄ້ານຕໍ່ຄໍາກ່າວຂອງໂປໂລ ແລະໝິ່ນປະໝາດທ່ານ. 46ຝ່າຍໂປໂລກັບບາຣະນາບາມີໃຈກ້າຫານ
ໄດ້ກ່າວວ່າ, "ຈໍາເປັນທີ່ຈະຕ້ອງກ່າວພຣະທໍາຂອງພຣະເຈົ້າໃຫ້ທ່ານທັງຫລາຍຟັງກ່ອນ ແຕ່
ຍ້ອນທ່ານທັງຫລາຍປັດຖິ້ມພຣະທໍານັ້ນ ແລະຖືວ່າຕົນບໍ່ສົມຄວນກັບຊີວິດອັນຕະຫລອດໄປ
ເປັນນິດ ດັ່ງນີ້ເຮົາກໍປິ່ນໜ້າໄປຫາພວກຕ່າງຊາດ. 47ເພາະຢ່າງນີ້ແຫລະ, ອົງພຣະຜູ້ເປັນເຈົ້າ
ໄດ້ຊົງສັ່ງເຮົາວ່າ, 'ເຮົາໄດ້ຕັ້ງທ່ານໄວ້ໃຫ້ເປັນແສງສະຫວ່າງຂອງຄົນຕ່າງຊາດເພື່ອທ່ານຈະ
ເປັນເຫດໃຫ້ພົ້ນເຖິງທີ່ສຸດປາຍແຜ່ນດິນໂລກ'." 48ຝ່າຍຄົນຕ່າງຊາດເມື່ອໄດ້ຍິນດັ່ງນັ້ນແລ້ວກໍມີ
ຄວາມຍິນດີ ແລະໄດ້ສັນລະເສີນພຣະທໍາຂອງພຣະເຈົ້າ ແລະຄົນທັງຫລາຍທີ່ຊົງໝາຍໄວ້
ແລ້ວເພື່ອໃຫ້ໄດ້ຊີວິດອັນຕະຫລອດໄປເປັນນິດກໍໄດ້ວາງໃຈເຊື່ອ. 49ແລະພຣະທໍາຂອງອົງ
ພຣະຜູ້ເປັນເຈົ້າໄດ້ແຜ່ໄປທົ່ວຂອບເຂດນັ້ນ. 50ແຕ່ພວກຢິວໄດ້ຍົວະຍົງພວກຜູ້ຍິງທີ່ມີກຽດຕິຍົດ
ຊຶ່ງຢໍາເກງພຣະເຈົ້າກັບທັງຜູ້ຊາຍທີ່ເປັນໃຫຍ່ໃນເມືອງນັ້ນ ໄດ້ກໍ່ການຂົ່ມເຫງໂປໂລ ແລະບາ-
ຣະນາບາ ຈຶ່ງຂັບໄລ່ທ່ານທັງສອງອອກຈາກເຂດແດນຂອງເຂົາ. 51ຝ່າຍໂປໂລກັບບາຣະນາ-
ບາກໍຕັດສໍາພັນ ດ້ວຍສັ່ນຂີ້ຝຸ່ນທີ່ຕິດຕີນອອກ ແລ້ວກໍໄປຍັງເມືອງອີໂກນີອົນ. 52ແຕ່ພວກສິດກໍ
ເຕັມໄປດ້ວຍຄວາມຊົມຊື່ນຍິນດີ ແລະດ້ວຍພຣະວິນຍານບໍລິສຸດ.

# ບົດທີ 14

## ໂປໂລກັບບາຣະນາບາທີ່ເມືອງອີໂກນີອົນ

1ອັນໜຶ່ງໃນເມືອງ ອີໂກນີອົນກໍເໝືອນກັນ ທ່ານທັງສອງໄດ້ພາກັນເຂົ້າໄປກ່າວໃນໂຮງທຳມະ
ເທດສະໜາຂອງຊາວ ຢິວ ຈົນຊາວ ຢິວ ແລະຊາວ ກຣີກ ຈຳນວນຫລວງຫລາຍໄດ້ວາງໃຈເຊື່ອ.
2ແຕ່ພວກ ຢິວ ທີ່ບໍ່ຍອມເຊື່ອກໍໄດ້ຍົວະຍົງຄົນຕ່າງຊາດໃຫ້ຄຶດປອງຮ້າຍຕໍ່ພວກພີ່ນ້ອງ. 3ຝ່າຍ
ທ່ານທັງສອງໄດ້ອາໃສຢູ່ທີ່ນັ້ນເຫິງສົມຄວນມີໃຈກ້າກ່າວດ້ວຍຄວາມວາງໃຈໃນອົງ ພຣະຜູ້ເປັນ-
ເຈົ້າ ແລະພຣະອົງໄດ້ຊົງເປັນພະຍານເລື່ອງພຣະຄຸນຂອງພຣະອົງ ໂດຍຊົງໂຜດໃຫ້ທ່ານທັງ
ສອງເຮັດໝາຍສຳຄັນແລະການອັດສະຈັນໄດ້. 4ແຕ່ພົນລະເມືອງສ່ວນໃຫຍ່ແຕກເປັນສອງພວກ
ພວກໜຶ່ງຢູ່ຝ່າຍພວກ ຢິວ ແລະອີກພວກໜຶ່ງຢູ່ຝ່າຍພວກອັກຄະສາວົກ. 5ເມື່ອຄົນຕ່າງຊາດກັບ
ພວກ ຢິວ ແລະພວກຜູ້ປົກຄອງຂອງເຂົາ ໄດ້ພ້ອມໃຈກັນຈະເຮັດການຫຍາບຊ້າ ແລະເອົາກ້ອນ
ຫີນຄວ່າງໃສ່ ເປໂຕ ແລະ ບາຣະນາບາ. 6ທ່ານທັງສອງກໍຮູ້ເລື່ອງ ຈຶ່ງໜີໄປຍັງ ເມືອງທີ່ຢູ່ໃນ
ແຂວງ ລີກາໂອເນຍ ຄືເມືອງ ລີຊະທາ, ເມືອງ ເດຣະເບ, ກັບເຂດອ້ອມຮອບນັ້ນ. 7ຢູ່ທີ່ນັ້ນທ່ານ
ທັງສອງກໍປະກາດຂ່າວປະເສີດ.

## ໂປໂລຖືກເຂົາຄວ່າງຫີນໃສ່ທີ່ເມືອງລີຊະທາ

8ອັນໜຶ່ງທີ່ເມືອງ ລີຊະທາ ມີຊາຍຜູ້ໜຶ່ງນັ່ງຢູ່ໃຊ້ຕີນບໍ່ໄດ້ ເປັນງ່ອຍຕັ້ງແຕ່ເກີດມາແລະບໍ່ໄດ້
ຍ່າງຈັກເທື່ອ. 9ຄົນຜູ້ນີ້ກໍຟັງ ໂປໂລ ເວົ້າຢູ່ ເມື່ອ ໂປໂລ ເພ່ງເບິ່ງກໍເຫັນຄົນນັ້ນມີຄວາມເຊື່ອພໍຈະດີ
ພະຍາດໄດ້. 10ຈຶ່ງຮ້ອງສັ່ງດ້ວຍສຽງອັນດັງວ່າ “ຈົ່ງລຸກຢືນຂຶ້ນຊື່” ຄົນງ່ອຍນັ້ນກໍໂດດຂຶ້ນແລ້ວ
ຍ່າງໄປມາ. 11ເມື່ອປະຊາຊົນເຫັນເຫດການທີ່ ໂປໂລ ເຮັດນັ້ນກໍພາກັນຮ້ອງຂຶ້ນເປັນພາສາ ລີກາ-
ໂອເນຍ ວ່າ “ພວກພະແປງກາຍເປັນມະນຸດລົງມາຫາພວກເຮົາແລ້ວ.” 12ແລະເຂົາໄດ້ເອີ້ນ ບາ-
ຣະນາບາ ວ່າພະ ຊູດ ແລະເອີ້ນ ໂປໂລ ວ່າພະ ເຮຣະເມ ເພາະທ່ານເປັນຜູ້ເວົ້າ. 13ສ່ວນປະໂລຫິດ
ປະຈຳຮູບພະ ຊູດ ຊຶ່ງຕັ້ງຢູ່ໜ້າເມືອງ ໄດ້ຈູງງົວເຖິກແລະຖືພວງດອກໄມ້ມາເຖິງປະຕູເມືອງພ້ອມ
ດ້ວຍປະຊາຊົນ ໝາຍໃຈວ່າຈະຖວາຍເຄື່ອງບູຊາ. 14ແຕ່ເມື່ອອັກຄະສາວົກ ບາຣະນາບາ ກັບ
ໂປໂລ ໄດ້ຍິນດັ່ງນັ້ນ ກໍຈີກເສື້ອຜ້າຂອງຕົນເສຍແລ້ວແລ່ນເຂົ້າໄປຖ້າມກາງ ປະຊາຊົນຮ້ອງຂຶ້ນ
ວ່າ, 15“ທ່ານທັງຫລາຍເອີຍ, ເຫດສັນໃດຈຶ່ງເຮັດການຢ່າງນັ້ນ ເຮົາທັງສອງເປັນມະນຸດທຳມະ
ດາຢ່າງດຽວກັນກັບທ່ານທັງຫລາຍ ແລະມາປະກາດຂ່າວປະເສີດໃຫ້ພວກທ່ານກັບຈາກສິ່ງອັນບໍ່
ມີປະໂຫຍດເຫລົ່ານີ້ ໃຫ້ພວກທ່ານມາຫາ ພຣະເຈົ້າ ຜູ້ຊົງພຣະຊົນຢູ່ ຜູ້ໄດ້ຊົງສ້າງຟ້າສະຫວັນ,
ແຜ່ນດິນໂລກ, ນ້ຳທະເລ, ແລະສັບພະທຸກສິ່ງທີ່ຢູ່ໃນທີ່ນັ້ນ. 16ໃນຄາວທີ່ລ່ວງໄປແລ້ວພຣະອົງ
ໄດ້ຊົງປ່ອຍບັນດາປະຊາຊາດໃຫ້ເຮັດຕາມຮີດຄອງຂອງເຂົາ. 17ເຖິງປານນັ້ນພຣະອົງບໍ່ໄດ້ຊົງ
ໃຫ້ຂາດພະຍານເຖິງເລື່ອງພຣະອົງ ເພາະພຣະອົງໄດ້ຊົງເຮັດການດີ ຄືໄດ້ບັນດານໃຫ້ຝົນຕົກ
ຈາກຟ້າສະຫວັນແລະໃຫ້ມີລະດູເກີດຜົນ ຈຶ່ງຊົງໂຜດໃຫ້ພວກທ່ານອີ່ມເຕັມໃຈດ້ວຍອາຫານການ
ກິນ ແລະດ້ວຍຄວາມຊົມຊື່ນຍິນດີ.” 18ເຖິງແມ່ນໄດ້ກ່າວຄຳເຫລົ່ານັ້ນແລ້ວກໍດີ ອັກຄະສາວົກ
ຍັງຫ້າມປະຊາຊົນບໍ່ໃຫ້ຖວາຍເຄື່ອງບູຊາແກ່ຕົນໄດ້ໂດຍຍາກຈົນເກືອບຈະບໍ່ແພ້.

19ແຕ່ມີພວກ ຢິວ ມາຈາກເມືອງ ອັນຕີໂອເຂຍ ແລະເມືອງ ອີໂກນີອົນ ເມື່ອໄດ້ຊັກຊວນປະຊາ-

ຊຸນແລ້ວ ເຂົາໄດ້ເອົາກ້ອນຫີນຄວ່າງໃສ່ໂປໂລ ແລະລາກທ່ານອອກໄປນອກເມືອງ ຄຶດວ່າທ່ານ
ຕາຍແລ້ວ. [20]ແຕ່ເມື່ອພວກລູກສິດໄດ້ມາອ້ອມທ່ານໄວ້ແລ້ວທ່ານໄດ້ລຸກຂຶ້ນເຂົ້າໄປໃນເມືອງ
ເຖິງວັນໜ້າທ່ານໄດ້ອອກໄປຍັງເມືອງ ເດຣະເບພ້ອມກັບທ່ານບາຣະນາບາ.

[21]ທ່ານທັງສອງໄດ້ປະກາດຂ່າວປະເສີດໃນເມືອງນັ້ນແລະເມື່ອໄດ້ລູກສິດຫລາຍຄົນສົມຄວນ
ກໍໄດ້ກັບຄືນເມືອງລີຊະທາ, ເມືອງອີໂກນີອົນ ແລະເມືອງອັນຕີໂອເຂຍ. [22]ໄດ້ເຮັດໃຫ້ໃຈລູກສິດ
ທັງຫລາຍຕັ້ງໝັ້ນຄົງຢູ່ ຕັກເຕືອນເຂົາໃຫ້ດຳລົງຢູ່ໃນພຣະສາດສະໜາ, ແລະກ່າວວ່າ, "ເພື່ອຈະ
ເຂົ້າໃນແຜ່ນດິນຂອງພຣະເຈົ້າ ເຮົາທັງຫລາຍຈຳເປັນຕ້ອງຜ່ານຄວາມທຸກລຳບາກຫລາຍປະ-
ການ." [23]ເມື່ອໄດ້ເລືອກຕັ້ງເຖົ້າແກ່ໃຫ້ສາວົກໄວ້ໃນທຸກຄຣິສຕະຈັກ ທັງໄດ້ອ້ອນວອນແລະຖືສິນ
ອົດອາຫານ ແລ້ວທ່ານທັງສອງໄດ້ມອບເຂົາໄວ້ກັບອົງພຣະຜູ້ເປັນເຈົ້າທີ່ເຂົາວາງໃຈເຊື່ອນັ້ນ.

## ກັບມາຍັງເມືອງອັນຕີໂອເຂຍແຂວງຊີເຣຍ

[24]ເມື່ອທ່ານທັງສອງໄດ້ຜ່ານແຂວງປີຊີເດຍ ກໍໄດ້ມາເຖິງແຂວງປຳຟີເລຍ. [25]ແລະເມື່ອໄດ້
ກ່າວພຣະທຳໃນເມືອງເປເຄແລ້ວ ກໍລົງໄປຍັງເມືອງອັດຕາເລຍ. [26]ຈາກທີ່ນັ້ນທ່ານທັງສອງໄດ້
ລົງເຮືອສະເພົາເດີນທາງອອກໄປຍັງເມືອງອັນຕີໂອເຂຍ ຄືເມືອງທີ່ເຂົາໄດ້ຮັບມອບໄວ້ແກ່ພຣະ-
ຄຸນຂອງພຣະເຈົ້າ ໃຫ້ເຮັດໜ້າທີ່ນັ້ນຊຶ່ງທ່ານທັງສອງໄດ້ເຮັດໃຫ້ສຳເລັດແລ້ວ. [27]ເມື່ອມາເຖິງ
ແລ້ວທ່ານທັງສອງໄດ້ເອີ້ນໃຫ້ຄຣິສຕະຈັກມາປະຊຸມ ແລ້ວເລົ່າໃຫ້ເຂົາຟັງເຖິງການທັງປວງ ຊຶ່ງ
ພຣະເຈົ້າຜູ້ຊົງສະຖິດກັບເຂົາໄດ້ຊົງກະທຳ ກັບການທີ່ພຣະອົງໄດ້ຊົງໄຂປະຕູແຫ່ງຄວາມເຊື່ອ
ໃຫ້ຄົນຕ່າງຊາດເຂົ້າມາ. [28]ແລ້ວທ່ານທັງສອງໄດ້ອາໃສຢູ່ກັບພວກສິດຫລາຍວັນ.

# ບົດທີ 15

## ການປະຊຸມໃນກຸງເຢຣູຊາເລັມ

[1]ມີລາງຄົນລົງມາຈາກແຂວງຢູດາຍໄດ້ຕັ້ງຕົ້ນສັ່ງສອນພວກພີ່ນ້ອງວ່າ, "ຖ້າທ່ານທັງຫລາຍບໍ່
ຮັບພິທີຕັດຕາມຮີດຄອງຂອງໂມເຊ ພວກທ່ານຈະພົ້ນບໍ່ໄດ້." [2]ເມື່ອເກີດການໂຕ້ແຍ້ງຜິດຖຽງ
ກັນຫລາຍ ລະຫວ່າງໂປໂລແລະບາຣະນາບາກັບຄົນເຫລົ່ານັ້ນ ເຂົາກໍໄດ້ຕົກລົງໃຫ້ໂປໂລແລະ
ບາຣະນາບາກັບຄົນອື່ນໆ ໃນພວກນັ້ນ ຂຶ້ນເມື່ອຫາລືກັນກັບອັກຄະສາວົກແລະພວກເຖົ້າແກ່ໃນ
ກຸງເຢຣູຊາເລັມ ດ້ວຍເລື່ອງຜິດຖຽງກັນນັ້ນ. [3]ດັ່ງນັ້ນຄຣິສຕະຈັກໄດ້ຈັດສົ່ງທ່ານເຫລົ່ານັ້ນໄປ
ແລະຂະນະທີ່ກຳລັງຜ່ານແຂວງຟອຍນີເກແລະແຂວງຊາມາເຣຍໄປ ເຂົາໄດ້ເລົ່າເຖິງເລື່ອງ
ການກັບໃຈໃໝ່ຂອງຄົນຕ່າງຊາດ ຈຶ່ງເຮັດໃຫ້ພີ່ນ້ອງທັງປວງມີຄວາມຍິນດີຫລາຍ. [4]ເມື່ອມາເຖິງ
ກຸງເຢຣູຊາເລັມ ຄຣິສຕະຈັກ, ພວກອັກຄະສາວົກ, ແລະພວກເຖົ້າແກ່ໄດ້ຕ້ອນຮັບທ່ານເຫລົ່າ-
ນັ້ນ ແລ້ວພວກທ່ານໄດ້ເລົ່າເຖິງການທັງປວງທີ່ພຣະເຈົ້າຜູ້ຊົງສະຖິດຢູ່ນຳເຂົາໄດ້ຊົງກະທຳ.
[5]ແຕ່ມີບາງຄົນໃນພວກຟາຣີຊາຍທີ່ເຊື່ອແລ້ວ ໄດ້ຢືນຂຶ້ນກ່າວວ່າ, 'ຄົນຕ່າງຊາດນັ້ນຕ້ອງໃຫ້
ເຂົາຮັບພິທີຕັດ ແລະສັ່ງໃຫ້ເຂົາຖືຮັກສາພຣະບັນຍັດຂອງໂມເຊ.'

[6]ຝ່າຍອັກຄະສາວົກກັບພວກເຖົ້າແກ່ໄດ້ປະຊຸມກັນພິຈາລະນາບັນຫາເລື່ອງນີ້. [7]ເມື່ອເກີດການ
ໂຕ້ຖຽງກັນຫລາຍແລ້ວ ເປໂຕໄດ້ລຸກຂຶ້ນກ່າວວ່າ, "ພີ່ນ້ອງທັງຫລາຍເອີຍ, ເຈົ້າທັງຫລາຍຮູ້ຢູ່

ວ່າ ເມື່ອຫົວທີນັ້ນ ພຣະເຈົ້າ ໄດ້ຊົງຄັດເລືອກເອົາເຮົາຈາກພວກເຈົ້າເພື່ອວ່າດ້ວຍປາກຂອງເຮົາ
ຄົນຕ່າງຊາດຈະໄດ້ຍິນພຣະທຳເລື່ອງຂ່າວປະເສີດ ແລະຈະໄດ້ເຊື່ອ. [8]ພຣະເຈົ້າຜູ້ຊົງຢັ່ງຮູ້ຈິດ-
ໃຈໄດ້ຊົງສະແດງການຕ້ອນຮັບເຂົາ ໂດຍຊົງປະທານ ພຣະວິນຍານບໍລິສຸດ ໃຫ້ເຂົາ ເໝືອນໄດ້
ປະທານ ແກ່ພວກເຮົາແລ້ວ. [9]ພຣະອົງບໍ່ໄດ້ຊົງຖືວ່າເຂົາແຕກຕ່າງກັບພວກເຮົາ ເພາະພຣະອົງ
ໄດ້ຊົງຊຳລະຈິດໃຈຂອງເຂົາໃຫ້ສະອາດດ້ວຍຄວາມເຊື່ອ. [10]ຖ້າຢ່າງນັ້ນ, ບັດນີ້ເປັນຫຍັງເຈົ້າ
ທັງຫລາຍຈຶ່ງທົດລອງ ພຣະເຈົ້າ ໂດຍເອົາແອກວາງໃສ່ຄໍລູກສິດ ຊຶ່ງແອກນັ້ນບັນພະບຸລຸດຂອງ
ເຮົາຫລືຕົວ ເຮົາ ເອງກໍ ແບກບໍ່ ໄຫວ. [11]ແຕ່ພວກ ເຮົາ ເຊື່ອວ່າ ເຮົາຈະ ໄດ້ພົ້ນ ໂດຍພຣະຄຸນ ຂອງ
ພຣະອົງເຈົ້າ ເຢຊູ ເໝືອນຢ່າງເຂົາ.”

[12]ຝ່າຍຄົນທັງປວງກໍມິດງຽບຢູ່ ຟັງ ບາຣະນາບາ ກັບ ໂປໂລ ເລົ່າເລື່ອງໝາຍສຳຄັນແລະການ
ອັດສະຈັນຕ່າງໆ ທີ່ ພຣະເຈົ້າ ໄດ້ຊົງກະທຳ ໂດຍ ເຂົາໃນໝູ່ຄົນຕ່າງຊາດ. [13]ເມື່ອການກ່າວນັ້ນ
ຈົບລົງແລ້ວ ຢາໂກໂບ ໄດ້ກ່າວຂຶ້ນວ່າ, “ຈົ່ງຟັງເຮົາກ່ອນ, ພີ່ນ້ອງທັງຫລາຍເອີຍ. [14]ຊີເມໂອນ
ໄດ້ເລົ່າໃຫ້ຟັງ ແລ້ວວ່າ ພຣະເຈົ້າ ໄດ້ຊົງຢ້ຽມຢາມຄົນຕ່າງຊາດເທື່ອທຳອິດ ເພື່ອຊົງ ເລືອກເອົາ
ພົນລະເມືອງກຸ່ມໜຶ່ງອອກຈາກເຂົາ ໃຫ້ເປັນຂອງພຣະອົງ. [15]ຄຳຂອງຜູ້ປະກາດພຣະທຳກໍຖືກ-
ຕ້ອງກັບເລື່ອງນີ້ຕາມທີ່ໄດ້ຂຽນໄວ້ແລ້ວວ່າ.

[16] ‘ພາຍຫລັງເຫດການນັ້ນເຮົາຈະກັບຄືນມາ
ເຮົາຈະສ້າງຜາສາດຂອງ ດາວິດ ທີ່ເພພັງລົງແລ້ວຂຶ້ນໃໝ່
ສິ່ງທີ່ເພພັງນັ້ນເຮົາຈະສ້າງຂຶ້ນໃໝ່
ແລະຈະຕັ້ງຂຶ້ນອີກ
[17] ເພື່ອຄົນອື່ນໆ ຈະໄດ້ສະແຫວງຫາອົງ ພຣະຜູ້ເປັນເຈົ້າ
ຄືບັນດາຄົນຕ່າງຊາດທີ່ເຮົາໄດ້ເອີ້ນ
ມາເປັນພົນລະເມືອງຂອງເຮົາ.
[18] ອົງ ພຣະຜູ້ເປັນເຈົ້າ
ຜູ້ຊົງແຈ້ງເຫດການເຫລົ່ານີ້ໃຫ້ຊາບແຕ່ບູຮານການ
ໄດ້ຊົງກ່າວໄວ້ດັ່ງນີ້.’

[19]ເຫດສັນນີ້ຕາມຄວາມເຫັນຂອງເຮົາວ່າ ຢ່າຣົບກວນຄົນຕ່າງຊາດທີ່ກຳລັງຫລົບມາຫາ ພຣະ-
ເຈົ້າ. [20]ແຕ່ເຮົາຈົ່ງສັ່ງເຂົາເປັນລາຍລັກອັກສອນ ໃຫ້ເວັ້ນເສຍຈາກສິ່ງຊົ່ວມົວໝອງເນື່ອງດ້ວຍ
ພຣະທຽມ, ຈາກການຫລິ້ນຊູ້, ຈາກການກິນສັດຕາຍຮັດຄໍແລະຈາກການກິນເລືອດ. [21]ເພາະວ່າ
ຕັ້ງແຕ່ເຊັ່ນບູຮານມາໃນທຸກເມືອງມີຜູ້ປະກາດເລື່ອງຂອງ ໂມເຊ ເພາະເຂົາໄດ້ອ່ານພຣະບັນຍັດ
ຂອງທ່ານໃນໂຮງທຳມະເທດສະໜາທຸກວັນຊະບາໂຕ.

## ຄວາມເຫັນຂອງທີ່ປະຊຸມ

[22]ຂະນະນັ້ນພວກອັກຄະສາວົກແລະພວກເຖົ້າແກ່ກັບຄຣິສຕະຈັກທັງໝົດ ກໍເຫັນດີເລືອກເອົາ
ຊາຍບາງຄົນໃນພວກເຂົາ ໃຫ້ໄປຍັງເມືອງ ອັນຕີໂອເຂຍ ພ້ອມດ້ວຍ ໂປໂລ ແລະ ບາຣະນາບາ ຄື
ຢູດາ ຜູ້ມີຊື່ອີກວ່າ ບາຣະຊາບາ ກັບ ຊີລາ ຊາຍທັງສອງນີ້ເປັນຄົນສຳຄັນໃນພວກພີ່ນ້ອງ. [23]ເຂົາ

ໄດ້ຂຽນຈົດໝາຍມອບໃຫ້ທ່ານທັງສອງຖືໄປວ່າ,
"ອັກຄະສາວົກແລະພວກເຖົ້າແກ່ຜູ້ເປັນພີ່ນ້ອງຂອງພວກທ່ານ ຄຳນັບມາຍັງທ່ານ
ທັງຫລາຍຜູ້ເປັນພີ່ນ້ອງ ຊຶ່ງເປັນຄົນຕ່າງຊາດທີ່ຢູ່ໃນເມືອງອັນຕີໂອເຂຍ ແຂວງ
ຊີເຣຍ ແລະ ແຂວງ ກີລີເກຍ ຊາບ. [24]"ດ້ວຍພວກເຮົາໄດ້ຍິນຂ່າວວ່າມີລາງຄົນ
ໃນພວກເຮົາ ໄດ້ໄປຮົບກວນແລະເຮັດໃຫ້ໃຈຂອງພວກທານປັ່ນປ່ວນໄປ ດ້ວຍ
ຖ້ອຍຄຳທີ່ເຮົາບໍ່ໄດ້ສັ່ງເຂົາ. [25]ພວກເຮົາຈຶ່ງພ້ອມກັນເຫັນດີທີ່ຈະເລືອກເອົາຊາຍ
ບາງຄົນ ໃຫ້ໄປຫາພວກທ່ານພ້ອມດ້ວຍ ບາຣະນາບາ ແລະ ໂປໂລ ຜູ້ເປັນທີ່ຮັກ
ຂອງພວກເຮົາ. [26]ຄືຜູ້ທີ່ຍອມສະຫລະຊີວິດຂອງຕົນ ເພາະເຫັນແກ່ພຣະນາມ
ຂອງ ພຣະເຢຊູຄຣິດ ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ. [27]ເຫດສັນນັ້ນ
ພວກເຮົາຈຶ່ງໃຊ້ ຢູດາ ກັບ ຊີລາ ມາ ເປັນຜູ້ທີ່ຈະເລົ່າຂໍ້ຄວາມອັນດຽວກັນນີ້ດ້ວຍ
ປາກຂອງເຂົາ. [28]ດ້ວຍວ່າ ພຣະວິນຍານບໍລິສຸດ ຊົງເຫັນດີພ້ອມດ້ວຍພວກເຮົາ
ວ່າ ຈະບໍ່ວາງພາລະໜັກໃດໆ ໃສ່ພວກທ່ານ ນອກຈາກສິ່ງເຫລົ່ານີ້ທີ່ຈຳເປັນຄື.
[29]ໃຫ້ທ່ານທັງຫລາຍ ງົດຈາກການກິນສິ່ງຂອງທີ່ເຂົາບູຊາແກ່ພຣະທຽມ, ຈາກ
ການກິນເລືອດ, ຈາກການກິນສັດຮັດຄໍຕາຍ, ແລະຈາກການຫລິ້ນຊູ້ ຖ້າທ່ານ
ທັງຫລາຍງົດຈາກການເຫລົ່ານີ້ ທ່ານກໍຢູ່ເຢັນເປັນສຸກ ຈົ່ງຈະເລີນເທີນ."
[30]ເມື່ອຖືກໃຊ້ໄປແລ້ວທ່ານເຫລົ່ານັ້ນກໍລົງໄປເຖິງເມືອງອັນຕີໂອເຂຍ ເມື່ອໄດ້ເອີ້ນຄົນທັງ
ປວງມາປະຊຸມກັນແລ້ວ ຈຶ່ງມອບຈົດໝາຍສະບັບນັ້ນໃຫ້. [31]ເມື່ອອ່ານແລ້ວກໍມີຄວາມຍິນດີໃນ
ຄຳໜູນໃຈນັ້ນ. [32]ຝ່າຍ ຢູດາ ກັບ ຊີລາ ເປັນຜູ້ປະກາດພຣະທຳເໝືອນກັນ ໄດ້ກ່າວເຕືອນສະຕິ
ໜູນໃຈພວກພີ່ນ້ອງເປັນການຍືດຍາວໃຫ້ມີກຳລັງຂຶ້ນ. [33]ຄັນພັກຢູ່ເປັນເວລາພໍສົມຄວນແລ້ວ
ທ່ານທັງສອງກໍຖືກໃຫ້ກັບຄືນດ້ວຍຄວາມສຸກ ເມື່ອຫາຜູ້ທີ່ໃຊ້ຕົນມານັ້ນ. [34][ຝ່າຍຊີລາກໍເຫັນດີ
ຍັງຈະພັກຢູ່ທີ່ນັ້ນ.] [35]ແຕ່ໂປໂລກັບບາຣະນາບາກໍຍັງຢູ່ເມືອງອັນຕີໂອເຂຍຕໍ່ໄປ ທ່ານທັງສອງ
ພ້ອມດ້ວຍຄົນອື່ນໆ ອີກຫລາຍຄົນ ໄດ້ສັ່ງສອນແລະປະກາດຂ່າວປະເສີດ ຄືພຣະທຳຂອງ
ພຣະຜູ້ເປັນເຈົ້າ.

## ໂປໂລກັບບາຣະນາບາແຍກຈາກກັນ

[36]ຄັນລ່ວງໄປໄດ້ຫລາຍວັນແລ້ວ ໂປໂລ ຈຶ່ງເວົ້າກັບ ບາຣະນາບາ ວ່າ, "ໃຫ້ເຮົາພາກັນກັບໄປ
ຢ້ຽມຢາມພວກພີ່ນ້ອງ ໃນທຸກເມືອງທີ່ເຮົາໄດ້ປະກາດພຣະທຳຂອງອົງພຣະຜູ້ເປັນເຈົ້າ ແລ້ວນັ້ນ
ເພື່ອຮູ້ວ່າເຂົາເປັນຢ່າງໃດ." [37]ສ່ວນ ບາຣະນາບາ ມີນ້ຳໃຈຢາກເອົາ ໂຢຮັນ ຜູ້ມີຊື່ ວ່າມາຣະໂກ
ໄປນຳ. [38]ແຕ່ໂປໂລບໍ່ເຫັນຄວນທີ່ຈະເອົາ ໂຢຮັນ ໄປນຳ ດ້ວຍ ໂຢຮັນ ໄດ້ປະທ່ານທັງສອງໄວ້ທີ່
ແຂວງປຳຟີເລຍ ແລະບໍ່ໄດ້ໄປນຳເຂົາ. [39]ແລ້ວໄດ້ເກີດການຖົກຖຽງກັນຢ່າງແຂງແຮງຈົນແຍກ
ຈາກກັນ ບາຣະນາບາ ຈຶ່ງເອົາ ມາຣະໂກ ລົງເຮືອສະເພົາເດີນທາງໄປຍັງເກາະກຸບໂຣ. [40]ແຕ່ໂປ-
ໂລ ໄດ້ເລືອກເອົາຊີລາ ແລະເມື່ອພວກພີ່ນ້ອງໄດ້ຝາກທ່ານທັງສອງໄວ້ໃນພຣະຄຸນຂອງ ພຣະຜູ້-
ເປັນເຈົ້າ ແລ້ວ ກໍໄດ້ອອກໄປ. [41]ແລ້ວທ່ານໄດ້ຜ່ານແຂວງຊີເຣຍກັບແຂວງ ກີລີເກຍ ໜູນໃຈ
ຄຣິສຕະຈັກໃຫ້ມີກຳລັງຂຶ້ນ.

# ບົດທີ 16

## ຕີໂມທຽວຮ່ວມທາງກັບໂປໂລແລະຊີລາ

[1]ຝ່າຍໂປໂລກໍໄດ້ໄປຍັງເມືອງເດຣະເບ ແລະເມືອງລີຊະທາ ແລະເບິ່ງແມ, ທີ່ນັ້ນມີລູກສິດຜູ້
ໜຶ່ງຊື່ຕີໂມທຽວ ເປັນລູກຊາຍຂອງຍິງຊາວຢິວຄົນໜຶ່ງຜູ້ເຊື່ອຖື ແຕ່ພໍ່ເປັນຊາວກຣີກ. [2]ຕີໂມ-
ທຽວ ເປັນຄົນມີຊື່ສຽງດີໃນຖ້າມກາງພວກພີ່ນ້ອງທີ່ຢູ່ໃນເມືອງລີຊະທາ ແລະເມືອງອີໂກນີອົນ.
[3]ໂປໂລມີໃຈຢາກເອົາຕີໂມທຽວໄປນຳ ຈຶ່ງໄດ້ໃຫ້ຮັບພິທີຕັດເພາະເຫັນແກ່ຊາວຢິວທີ່ຢູ່ໃນເຂດ
ນັ້ນ ເພາະຄົນເຫລົ່ານັ້ນທຸກຄົນຮູ້ວ່າພໍ່ຂອງທ່ານເປັນຊາວກຣີກ. [4]ເມື່ອທ່ານເຫລົ່ານັ້ນກຳລັງ
ຜ່ານໄປຕາມເມືອງຕ່າງໆ ກໍໄດ້ມອບຂໍ້ບັງຄັບທີ່ພວກອັກຄະສາວົກແລະພວກເຖົ້າແກ່ ທີ່ຢູ່ໃນກຸງ
ເຢຣູຊາເລັມ ໄດ້ຕົກລົງກັນນັ້ນໃຫ້ເຂົາຖືຮັກສາ. [5]ດ້ວຍເຫດນີ້ຄຣິສຕະຈັກທັງຫລາຍຈຶ່ງເຂັ້ມແຂງ
ຂຶ້ນໃນຄວາມເຊື່ອ ແລະຈຳນວນຄຣິສຕະສະມາຊິກກໍທະວີຂຶ້ນທຸກໆ ວັນ.

## ໂປໂລເຫັນນິມິດທີ່ເມືອງໂທອາດ

[6]ເມື່ອພຣະວິນຍານບໍລິສຸດຊົງຫ້າມບໍ່ໃຫ້ກ່າວພຣະທຳໃນແຂວງອາເຊຍ ທ່ານທັງສອງໄດ້
ທຽວໄປທົ່ວເຂດແດນເມືອງຟີເຄຍ ແລະເມືອງຄາລາເຕຍ. [7]ເມື່ອມາເຖິງເຂດມີເຊຍ ແລ້ວກໍພະ-
ຍາຍາມຈະເຂົ້າໃນເຂດແດນເມືອງບີທີເນຍ ແຕ່ພຣະວິນຍານຂອງພຣະເຢຊູບໍ່ຊົງອະນຸຍາດ.
[8]ເມື່ອທ່ານເຫລົ່ານັ້ນໄດ້ເດີນທາງລຽບເມືອງມີເຊຍໄປກໍລົງໄປເຖິງເມືອງໂທອາດ. [9]ໃນກາງຄືນ
ໂປໂລໄດ້ເຫັນໃນນິມິດ ມີຊາຍຊາວມາເກໂດເນຍຄົນໜຶ່ງຢືນຢູ່ອ້ອນວອນວ່າ, “ຂໍຂ້າມມາເຖິງ
ເມືອງມາເກໂດເນຍພີ້ ເພື່ອຊ່ອຍພວກຂ້ານ້ອຍແດ່ທ້ອນ.” [10]ເມື່ອທ່ານໄດ້ເຫັນນິມິດດັ່ງນັ້ນແລ້ວ
ພວກເຮົາຈຶ່ງພະຍາຍາມທັນທີທີ່ຈະອອກໄປເຖິງເມືອງມາເກໂດເນຍ ດ້ວຍເຫັນແນ່ວ່າພຣະເຈົ້າ
ໄດ້ຊົງເອີ້ນພວກເຮົາ ໃຫ້ໄປປະກາດຂ່າວປະເສີດແກ່ຊາວເມືອງນັ້ນ.

## ນາງລີເດຍຮັບເຊື່ອ

[11]ເຫດສັນນັ້ນເມື່ອຈາກເມືອງໂທອາດທາງເຮືອສະເພົາ ພວກເຮົາໄດ້ໄປທາງຊື່ເຖິງເມືອງຊາ-
ໂມທາເກ ຕົກວັນໜ້າກໍມາເຖິງເມືອງເນອາໂປລີ. [12]ເມື່ອອອກຈາກທີ່ນັ້ນແລ້ວກໍມາເຖິງເມືອງຟີ-
ລິບປອຍ ທີ່ເປັນເມືອງເອກໃນເຂດມາເກໂດເນຍ[ກ] ທັງເປັນຫົວເມືອງຂຶ້ນ ຝ່າຍພວກເຮົາໄດ້
ພັກຢູ່ທີ່ນັ້ນຫລາຍວັນສົມຄວນ. [13]ອັນໜຶ່ງໃນວັນຊະບາໂຕພວກເຮົາໄດ້ອອກໄປນອກປະຕູເມືອງ
ເຖິງຝັ່ງແມ່ນ້ຳ ທີ່ເຮົາຄຶດວ່າມີບ່ອນສຳລັບໄຫວ້ວອນ ຈຶ່ງໄດ້ນັ່ງລົງສົນທະນາກັບພວກຜູ້ຍິງທີ່ມາ
ໂຮມກັນ. [14]ແລະມີຍິງຄົນໜຶ່ງຊື່ລີເດຍມາຈາກເມືອງທົວເຕຣາ ເປັນຄົນຂາຍຜ້າສີມ່ວງອ່ອນ
ນາງມີໃຈຢຳເກງພຣະເຈົ້າ ເມື່ອນາງຟັງເຮົາຢູ່ພຣະເຈົ້າໄດ້ຊົງໄຂຈິດໃຈຂອງນາງ ໃຫ້ເອົາໃຈ-
ໃສ່ໃນຖ້ອຍຄຳທີ່ໂປໂລກຳລັງກ່າວນັ້ນ. [15]ເມື່ອນາງພ້ອມກັບໄທເຮືອນຂອງຕົນໄດ້ຮັບບັບຕິສະ-
ມາແລ້ວ ກໍໄດ້ເຊີນພວກເຮົາວ່າ, “ຖ້າພວກທ່ານເຫັນວ່າ ຂ້ານ້ອຍເປັນຜູ້ເຊື່ອໃນອົງພຣະຜູ້ເປັນ-
ເຈົ້າ ເຊີນເຂົ້າມາພັກອາໃສໃນເຮືອນຂອງຂ້ານ້ອຍ” ແລະນາງໄດ້ວອນຂໍຈົນເຮົາຂັດບໍ່ໄດ້.

---

[ກ]ຄືບ່ອນທີ່ຊາວໂຣມມາຕັ້ງຢູ່ໃນຕ່າງປະເທດ ແຕ່ຫາກຍັງມີສິດອັນຄົບຖ້ວນເໝືອນເຄີຍມີໃນປະເທດເດີມ
ຂອງຕົນ.

## ການຖືກຂັງຄຸກທີ່ເມືອງຟີລິບປອຍ

16ຢູ່ມາເມື່ອພວກເຮົາກຳລັງອອກໄປຍັງບ່ອນໄຫວ້ວອນ ມີຍິງໃຊ້ຄົນໜຶ່ງຊຶ່ງມີຜີໝໍດູເຂົ້າສິງຢູ່
ໄດ້ມາພົບພວກເຮົາ ຍິງນັ້ນເຄີຍໃຊ້ວິຊາໝໍດູຫາເງິນໃຫ້ນາຍຂອງຕົນໄດ້ເປັນຈຳນວນຫລາຍ.
17ຍິງນີ້ໄດ້ຕິດຕາມໂປໂລ ແລະພວກເຮົາໄປ ມັນຮ້ອງຂຶ້ນວ່າ, “ຄົນເຫລົ່ານີ້ແມ່ນຂ້ອຍໃຊ້ຂອງ
ພຣະເຈົ້າສູງສຸດໄດ້ມາປະກາດເລື່ອງທາງພົ້ນໃຫ້ແກ່ທ່ານທັງຫລາຍ.” 18ນາງໄດ້ເຮັດດັ່ງນີ້ເປັນ
ເວລາຫລາຍວັນ ຝ່າຍໂປໂລກໍເຫລືອໃຈຈຶ່ງຫລຽວໜ້າໄປສັ່ງຜີນັ້ນວ່າ, “ໃນພຣະນາມແຫ່ງພຣະ-
ເຢຊູຄຣິດ ກູສັ່ງມຶງຈົ່ງອອກຈາກຍິງນັ້ນເສຍ” ມັນກໍອອກມາໃນເວລານັ້ນ. 19ແຕ່ເມື່ອພວກນາຍ
ຂອງຍິງນັ້ນເຫັນວ່າພວກຕົນໝົດຫວັງທີ່ຈະໄດ້ເງິນແລ້ວ ກໍໄດ້ຈັບໂປໂລ ແລະຊີລາລາກໄປຫາ
ພວກຜູ້ປົກຄອງໃນບ່ອນຊຸມນຸມ. 20ເມື່ອໄດ້ພາທ່ານທັງສອງມາເຖິງພວກຜູ້ປົກຄອງແລ້ວ ກໍເວົ້າ
ວ່າ, “ສອງຄົນນີ້ແຫລະ, ໄດ້ກໍ່ການວຸ້ນວາຍຂຶ້ນໃນເມືອງຂອງເຮົາ. 21ເຂົາເປັນຊາວຢິວ ປະ-
ກາດຍັງຮີດຄອງປະເພນີອັນຜິດກົດ ທີ່ພວກເຮົາຊາວໂຣມຈະຮັບເອົາຫລືຂັບຕາມບໍ່ໄດ້.”

22ປະຊາຊົນກໍລຸກຂຶ້ນຕໍ່ສູ້ໂປໂລ ແລະຊີລາ ສ່ວນຜູ້ປົກຄອງກໍໄດ້ຈີກເຄື່ອງນຸ່ງຂອງທ່ານທັງ
ສອງເສຍ ແລ້ວສັ່ງໃຫ້ເອົາໄມ້ແສ້ຂ້ຽນ. 23ເມື່ອຂ້ຽນທ່ານທັງຫລາຍບາດແລ້ວກໍເອົາໄປຍັດໃສ່ຄຸກ
ແລະສັ່ງທຳມະໂຮງໃຫ້ຮັກສາເຂົາໄວ້ໃຫ້ດີ. 24ເມື່ອໄດ້ຮັບຄຳສັ່ງຢ່າງນີ້ແລ້ວທຳມະໂຮງກໍໄດ້ຍັດ
ທ່ານທັງສອງໄວ້ໃນຫ້ອງຊັ້ນໃນ ແລະເອົາຕີນໃສ່ຂື່ໄວ້ໃຫ້ແໜ້ນ.

25ແຕ່ພໍປະມານທ່ຽງຄືນ ໂປໂລ ກັບ ຊີລາ ກໍພາກັນອ້ອນວອນ ແລະຮ້ອງເພງສັນລະເສີນ ພຣະ-
ເຈົ້າ ພວກນັກໂທດກໍຟັງຢູ່. 26ໃນປັດຈຸບັນນັ້ນກໍເກີດແຜ່ນດິນຫວັ່ນໄຫວໃຫຍ່ ຈົນຮາກຄຸກສະ-
ທ້ານສະເທືອນ ແລະໃນທັນໃດນັ້ນປະຕູຄຸກກໍໄຂອອກທຸກບານແລະເຄື່ອງຜູກມັດທຸກຄົນກໍຫລຸດ
ເສຍ. 27ເມື່ອທຳມະໂຮງຕື່ນຂຶ້ນກໍເຫັນປະຕູຄຸກໄຂຈຶ່ງຄຶດວ່ານັກໂທດໜີໄປໝົດແລ້ວ ເລີຍຊັກ
ດາບອອກຈວນຈະຂ້າຕົວເສຍ. 28ແຕ່ໂປໂລໄດ້ຮ້ອງສຽງດັງວ່າ, “ຢ່າເຮັດຮ້າຍອັນໃດແກ່ຕົວ
ເທາະ ພວກເຮົາຍັງຢູ່ທີ່ນີ້ທຸກຄົນ.” 29ເມື່ອທຳມະໂຮງໄດ້ເອີ້ນໃຫ້ເອົາໄຟມາແລ້ວ ກໍແລ່ນໂດດ
ເຂົ້າໄປດ້ວຍຕົວສັ່ນ ຂາບລົງທີ່ຕີນຂອງໂປໂລ ແລະຊີລາ, 30ແລະໄດ້ພາທ່ານທັງສອງອອກມາ
ຖາມວ່າ, “ທ່ານເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຕໍ່ໄປຈຶ່ງຈະພົ້ນໄດ້.” 31ໂປໂລກັບຊີລາຕອບ
ວ່າ. “ຈົ່ງເຊື່ອວາງໃຈ[ກ] ໃນພຣະເຢຊູເຈົ້າ ແລ້ວທ່ານຈະໄດ້ພົ້ນ ທັງຄົວເຮືອນຂອງທ່ານດ້ວຍ.”
32ທ່ານທັງສອງຈຶ່ງໄດ້ກ່າວພຣະທຳຂອງພຣະຜູ້ເປັນເຈົ້າໃຫ້ທຳມະໂຮງກັບຄົວເຮືອນທຸກຄົນ
ຂອງທ່ານຟັງ. 33ໃນກາງຄືນຊົ່ວໂມງດຽວກັນນັ້ນທຳມະໂຮງໄດ້ພາໂປໂລກັບຊີລາໄປລ້າງບາດ
ແລະໃນທັນໃດນັ້ນທຳມະໂຮງໄດ້ຮັບບັບຕິສະມາກັບທັງຄົວເຮືອນຂອງຕົນ. 34ແລ້ວໄດ້ພາທ່ານ
ທັງສອງຂຶ້ນໄປໃນເຮືອນຂອງຕົນ ຈັດໂຕະລ້ຽງດ້ວຍຄວາມຊົມຊື່ນຍິນດີພ້ອມດ້ວຍຄົວເຮືອນທັງ
ໝົດເພາະໄດ້ວາງໃຈເຊື່ອໃນພຣະເຈົ້າແລ້ວ. 35ຄັນຮຸ່ງເຊົ້າມາພວກຜູ້ປົກຄອງໄດ້ໃຊ້ຕຳຫລວດ
ໄປບອກທຳມະໂຮງວ່າ ໃຫ້ປ່ອຍສອງຄົນນັ້ນເສຍ. 36ທຳມະໂຮງຈຶ່ງແຈ້ງຄວາມນັ້ນຕໍ່ໂປໂລວ່າ,
“ຜູ້ປົກຄອງໄດ້ໃຊ້ຄົນມາບອກວ່າ ໃຫ້ປ່ອຍທ່ານທັງສອງ ເຫດສັນນັ້ນ, ບັດນີ້ເຊີນອອກໄປດ້ວຍ
ຄວາມສະຫງົບສຸກ.” 37ແຕ່ໂປໂລໄດ້ກ່າວແກ່ພວກຕຳຫລວດວ່າ, “ເຂົາໄດ້ຂ້ຽນເຮົາຜູ້ເປັນສັນ-

[ກ]ຄຳວ່າ “ເຊື່ອວາງໃຈ” ມີຄວາມໝາຍວ່າ “ວາງໃຈ... ເປັນການສຳຄັນສຳລັບເວລາປັດຈຸບັນ.”

ຊາດ ໂຣມ ຕໍ່ໜ້າຄົນທັງຫລາຍກ່ອນຕັດສິນຄວາມແລະໄດ້ຍັດໃສ່ຄຸກໄວ້ ມາບັດນີ້ເຂົາຈະເສືອກ
ໄສໃຫ້ເຮົາອອກໄປເປັນການລັບຫລີ ເຮັດຢ່າງນັ້ນບໍ່ໄດ້ ໃຫ້ເຂົາເອງມາພາພວກເຮົາອອກໄປ.”
38ພວກຕຳຫລວດໄດ້ນຳຄວາມນີ້ໄປແຈ້ງຕໍ່ພວກຜູ້ປົກຄອງ ເມື່ອຜູ້ປົກຄອງໄດ້ຍິນວ່າ ໂປໂລ ກັບ
ຊີລາ ເປັນຄົນສັນຊາດ ໂຣມ ເຂົາກໍຕົກໃຈ. 39ຈຶ່ງພ້ອມກັນມາຂໍອະໄພໂທດນຳທ່ານທັງສອງ ຄັນ
ພາອອກໄປແລ້ວຈຶ່ງຂໍໃຫ້ໂປໂລ ກັບ ຊີລາ ອອກໄປຈາກເມືອງເສຍ. 40ເມື່ອໄດ້ອອກຈາກຄຸກແລ້ວ
ທ່ານທັງສອງໄດ້ເຂົ້າໄປໃນເຮືອນນາງ ລີເດຍ ເມື່ອພົບພວກພີ່ນ້ອງກໍໄດ້ກ່າວຄຳໜູນໃຈແລ້ວຈຶ່ງ
ລາຈາກໄປ.

# ບົດທີ 17

## ເກີດການອົບລະທົບວຸ້ນວາຍທີ່ເມືອງເທຊະໂລນີກ

1ເມື່ອທ່ານທັງສອງໄດ້ຜ່ານເມືອງ ອຳຟີໂປລີ ແລະເມືອງ ອາໂປໂລເນຍ ກໍມາເຖິງເມືອງ ເທຊະ-
ໂລນີກ ທີ່ນັ້ນມີໂຮງທຳມະເທດສະໜາຂອງຊາວຢິວ. 2ໂປໂລ ໄດ້ເຂົ້າໄປຫາເຂົາໃນໂຮງທຳຕາມ
ເຄີຍ ແລະໄດ້ອ້າງຂໍ້ຄວາມໃນພຣະຄຳພີໂຕ້ຕອບກັບເຂົາໄດ້ສາມວັນຊະບາໂຕ. 3ແລະໄຂຂໍ້-
ຄວາມຊີ້ແຈ້ງໃຫ້ເຫັນວ່າ ຈຳເປັນທີ່ອົງ ພຣະຄຣິດ ຕ້ອງຊົງທົນທຸກທໍລະມານ ແລະຖືກຊົງບັນ-
ດານໃຫ້ເປັນຄືນມາ ແລະກ່າວຕໍ່ໄປວ່າ, “ພຣະເຢຊູ ຜູ້ທີ່ເຮົາປະກາດ ແກ່ທ່ານທັງຫລາຍ ຜູ້ນີ້
ແຫລະ, ເປັນ ພຣະຄຣິດ.” 4ບາງຄົນໃນພວກເຂົາໄດ້ຍອມເຊື່ອຈຶ່ງສະໝັກເຂົ້າເປັນພັກພວກຂອງ
ໂປໂລ ກັບ ຊີລາ ຮ່ວມທັງຊາດ ກຣີກ ຜູ້ຢຳເກງ ພຣະເຈົ້າ ແລະຍິງຜູ້ສຳຄັນບໍ່ໃຊ້ໜ້ອຍຄົນ. 5ແຕ່
ພວກ ຢິວ ໄດ້ຄິດເຫິງສາ ໄປຄົບຄິດກັບຄົນພານຕາມຕະຫລາດ ຮວບຮວມກັນມາຢ່າງຫລວງ-
ຫລາຍກໍ່ການອົບລະທົບວຸ້ນວາຍຂຶ້ນໃນເມືອງ ແລ້ວເຂົ້າບຸກລຸກເຮືອນຂອງຢາໂຊນ ພະຍາຍາມ
ຈະນຳເອົາທັງສອງອອກມາໃຫ້ປະຊາຊົນ. 6ເມື່ອບໍ່ພົບເຂົາຈຶ່ງລາກເອົາຢາໂຊນກັບພີ່ນ້ອງລາງ
ຄົນໄປຫາຜູ້ປົກຄອງເມືອງນັ້ນແລະຮ້ອງຂຶ້ນວ່າ, “ຄົນເຫລົ່ານີ້ເປັນພວກຂວ້ຳໂລກມະນຸດໄດ້ມາທີ່
ນີ້. 7ແລ້ວຢາໂຊນໄດ້ຮັບຕ້ອນເຂົາໄວ້ ແລະບັນດາຄົນເຫລົ່ານີ້ໄດ້ເຮັດຜິດຕໍ່ຂໍ້ດຳລັດຂອງ ກາຍ-
ຊາ ໂດຍກ່າວວ່າ, “ມີກະສັດອີກອົງໜຶ່ງຄື ເຢຊູ.” 8ດ້ວຍຂໍ້ຄວາມນັ້ນພວກຢິວໄດ້ເຮັດໃຫ້ປະຊາ-
ຊົນກັບພວກຜູ້ປົກຄອງຮ້ອນໃຈຂຶ້ນ. 9ແລະ ເມື່ອມີຜູ້ຮັບປະກັນຕົວຂອງ ຢາໂຊນ ແລະຄົນອື່ນໆ
ແລ້ວກໍປ່ອຍເຂົາໄປ.

## ໂປໂລກັບຊີລາທີ່ເມືອງເບເຣຍ

10ໃນບັດດຽວນັ້ນພວກພີ່ນ້ອງຈຶ່ງໃຫ້ ໂປໂລ ກັບ ຊີລາ ອອກໄປຍັງ ເມືອງ ເບເຣຍ ໃນ ເວລາກາງ-
ຄືນ ເມື່ອເຖິງແລ້ວທ່ານທັງສອງໄດ້ເຂົ້າໄປໃນໂຮງທຳມະເທດສະໜາຂອງຊາວຢິວ. 11ພວກຢິວ
ເຫລົ່ານີ້ມີຈິດໃຈສູງສົ່ງກວ່າຊາວເມືອງ ເທຊະໂລນີກ ເພາະເຂົາມີຈິດໃຈເຫລື້ອມໃສຮັບເອົາພຣະ-
ທຳແລະຄົ້ນເບິ່ງພຣະຄຳພີທຸກວັນ ເພື່ອຢາກຮູ້ວ່າຂໍ້ຄວາມນັ້ນເປັນຈິງດັ່ງກ່າວໄວ້ຫລືບໍ່. 12ເຫດ
ສັນນັ້ນໃນພວກເຂົາມີຫລາຍຄົນໄດ້ຮັບເຊື່ອ ແລະພວກຜູ້ຍິງທີ່ມີກຽດຕິຍົດກັບຜູ້ຊາຍຊາວ ກຣີກ ບໍ່
ໃຊ່ໜ້ອຍຄົນໄດ້ຮັບ ເຊື່ອ ເໝືອນກັນ. 13ແຕ່ ເມື່ອພວກ ຢິວ ໃນ ເມືອງ ເທຊະໂລນີກ ຊາບຂ່າວວ່າ
ໂປໂລ ໄດ້ປະກາດພຣະທຳໃນ ເມືອງ ເບເຣຍ ເໝືອນກັນ ເຂົາກໍພາກັນມາທີ່ນັ້ນຍົວະຍົງປະຊາຊົນ

ໃຫ້ວຸ້ນວາຍຂຶ້ນ. 14ໃນທັນໃດນັ້ນພວກພີ່ນ້ອງໄດ້ໃຫ້ໂປໂລອອກໄປເຖິງແຄມທະເລ ສ່ວນຊີລາ
ກັບ ຕີໂມທຽວ ຍັງພັກຢູ່ທີ່ນັ້ນ. 15ຄົນທີ່ໄດ້ສົ່ງ ໂປໂລ ໄປນັ້ນກໍໄດ້ນຳທ່ານໄປ ເຖິງກຸງ ອາແຖນ
ແລະເມື່ອໄດ້ຮັບຄຳສັ່ງຈາກທ່ານບອກຊີລາກັບ ຕີໂມທຽວ ໃຫ້ມາຫາທ່ານໄວທີ່ສຸດເທົ່າທີ່ຈະໄວໄດ້
ເຂົາກໍຈາກໄປ.

## ໂປໂລທີ່ກຸງອາແຖນ

16ຂະນະທີ່ ໂປໂລ ຍັງລໍຖ້າ ຊີລາ ກັບ ຕີໂມທຽວ ຢູ່ກຸງ ອາແຖນ ນັ້ນ ທ່ານກໍມີຄວາມເດືອດຮ້ອນ
ເຄືອງໃຈ ເພາະໄດ້ເຫັນເມືອງນັ້ນເຕັມໄປດ້ວຍພຣະທຽມ. 17ເຫດສັນນັ້ນທ່ານຈຶ່ງໄດ້ໂຕ້ຖຽງກັນ
ພວກ ຢິວ ແລະຜູ້ທີ່ຢຳເກງ ພຣະເຈົ້າ ໃນ ໂຮງທຳ ແລະກັບບຸກຄົນທີ່ພົບໃນບ່ອນປະຊຸມຊົນທຸກ
ວັນ. 18ມີນັກປາດລາງຄົນໃນພວກ ເອປີກູຣຽວ ແລະໃນພວກສະໂຕອີໂກ ໄດ້ມາພົບທ່ານ ລາງຄົນ
ກ່າວວ່າ, "ຄົນເກັບເລັມຄວາມຮູ້ຜູ້ນີ້ຢາກ ເວົ້າອັນໃດ" ລາງຄົນກ່າວວ່າ "ເໝືອນເປັນຜູ້ປະກາດ
ພຣະຕ່າງດ້າວ" ເພາະໂປໂລປະກາດຂ່າວປະເສີດ ເລື່ອງ ພຣະເຢຊູ ແລະການຄືນມາຈາກຕາຍ.
19ດັ່ງນັ້ນເຂົາຈຶ່ງຈັບໂປໂລພາໄປຍັງສະພາ ອາເຣໂອປາໂຄ ແລ້ວຖາມວ່າ "ເຮົາຂໍຮູ້ໄດ້ຫລືບໍ່ວ່າ
ຄວາມສອນອັນໃໝ່ທີ່ທ່ານກ່າວນັ້ນເປັນຢ່າງໃດ. 20ດ້ວຍວ່າທ່ານນຳເລື່ອງແປກປະຫລາດເຖິງຫູ
ຂອງ ພວກ ເຮົາ ເຫດ ສັນນັ້ນ ພວກ ເຮົາຢາກຊາບ ວ່າ ເລື່ອງ ເຫລົ່ານີ້ ມີຄວາມໝາຍ ຢ່າງໃດ."
21ເພາະຊາວ ອາແຖນ ທັງປວງກັບພວກຕ່າງປະເທດຊຶ່ງອາໃສຢູ່ທີ່ນັ້ນ ບໍ່ເຄີຍເສຍເວລາກ່ຽວກັບ
ສິ່ງອື່ນໃດ ນອກຈາກຈະກ່າວຫລືຟັງສິ່ງໃໝ່ໆ.
22ຝ່າຍ ໂປໂລ ຈຶ່ງຢືນຂຶ້ນຖ້າມກາງສະພາ ອາເຣໂອປາໂຄ ແລ້ວກ່າວວ່າ, "ທ່ານຊາວກຸງ ອາ-
ແຖນ ເອີຍ, ໃນທຸກສິ່ງທຸກປະການຂ້າພະເຈົ້າເຫັນວ່າພວກທ່ານ ເປັນຜູ້ປະຕິບັດພະຕ່າງໆ ຢ່າງ
ເຄັ່ງຄັດ. 23ເພາະວ່າເມື່ອຂ້າພະເຈົ້າຜ່ານມາສັ່ງເກດເບິ່ງສິ່ງທັງປວງທີ່ພວກທ່ານນະມັດສະການ
ກໍໄດ້ເຫັນແທ່ນອັນໜຶ່ງມີຄຳຈາລຶກໄວ້ວ່າ 'ແດ່ ພຣະເຈົ້າ ທີ່ເຮົາບໍ່ຮູ້ຈັກ' ເຫດສັນນັ້ນພະທີ່ທ່ານ
ທັງຫລາຍນະມັດສະການ ເມື່ອຍັງບໍ່ຮູ້ຈັກ ພຣະເຈົ້າ ອົງນັ້ນແຫລະ, ຂ້າພະເຈົ້າມາປະກາດແກ່
ພວກທ່ານ. 24ພຣະເຈົ້າ ຜູ້ຊົງສ້າງໂລກກັບສິ່ງທັງປວງທີ່ຢູ່ໃນໂລກນັ້ນ ຄືຜູ້ຊົງເປັນເຈົ້າສະຫວັນ
ແລະ ແຜ່ນດິນ ໂລກ ພຣະອົງ ນັ້ນ ແຫລະ, ບໍ່ ໄດ້ ຊົງ ສະຖິດ ຢູ່ ໃນ ວິຫານ ທີ່ ມື ມະນຸດ ສ້າງ ໄວ້.
25ພຣະອົງບໍ່ຈຳເປັນໃຫ້ມະນຸດປະຕິບັດພຣະອົງ ເໝືອນວ່າຊົງມີພຣະປະສົງສິ່ງໜຶ່ງສິ່ງໃດ ເພາະ
ພຣະອົງນີ້ແຫລະ, ຊົງເປັນຜູ້ປະທານຊີວິດ, ລົມຫັນໃຈ, ແລະສິ່ງສາລະພັດແກ່ຄົນທັງປວງ.
26ພຣະອົງໄດ້ຊົງສ້າງມະນຸດທຸກຊາດ ໃຫ້ເກີດມາຈາກມະນຸດຄົນດຽວ[ກ] ແລະໃຫ້ເຂົາຢູ່ທົ່ວພິພົບ
ໂລກ ພຣະອົງໄດ້ຊົງກຳນົດເວລາ[ຂ] ແລະກຳນົດເຂດທີ່ເຂົາຢູ່ນັ້ນ. 27ເພື່ອເຂົາຈະໄດ້ສະແຫວງ-
ຫາ ພຣະເຈົ້າ ຫວັງວ່າເຂົາຈະງົມຫາຈົນພົບພຣະອົງ ແຕ່ທີ່ຈິງພຣະອົງບໍ່ໄດ້ຊົງຢູ່ໄກຈາກເຮົາທຸກ
ຄົນ. 28ເພາະວ່າ 'ໃນພຣະອົງນັ້ນພວກເຮົາມີຊີວິດ, ເຄື່ອນໄຫວໄປມາ, ແລະເປັນຢູ່' ດັ່ງນັກ
ແຕ່ງກາບກອນໃນພວກທ່ານລາງຄົນໄດ້ກ່າວວ່າ, 'ພວກເຮົາເປັນເຊື້ອສາຍຂອງພຣະອົງ ເໝືອນ
ກັນ.' 29ເຫດສັນນັ້ນເມື່ອເຮົາເປັນເຊື້ອສາຍຂອງ ພຣະເຈົ້າ ແລ້ວພວກເຮົາກໍບໍ່ຄວນຖືວ່າ ພຣະ-

---

[ກ]ຫລື "ໃຫ້ເກີດມາຈາກສາຍເລືອດອັນດຽວ." [ຂ]ອາດຈະໝາຍເຖິງເວລາຕ່າງ ໆ ຄື ວັນ, ອາທິດ, ເດືອນ, ປີ, ສັດຕະວັດ ຯລຯ ຫລືສະໄໝຕ່າງ ໆ.

ເຈົ້າຊົງເປັນຄຳ, ເງິນ, ຫລືຫີນ ທີ່ສະຫລັກຄວັດຫລືແຕ້ມດ້ວຍສິລະປະແລະຄວາມນຶກຄຶດຂອງ
ມະນຸດ. 30ໃນສະໄໝທີ່ມະນຸດຍັງໂງ່ບໍ່ຮູ້ຈັກພຣະເຈົ້າ ພຣະອົງກໍບໍ່ຊົງຖືໂທດ[ກ] ແຕ່ບັດນີ້ພຣະ-
ອົງຊົງສັ່ງແກ່ມະນຸດທັງປວງໃນທົ່ວທຸກບ່ອນ ໃຫ້ຖິ້ມໃຈເກົ່າເອົາໃຈໃໝ່. 31ເພາະວ່າພຣະອົງໄດ້
ຊົງກຳນົດວັນໜຶ່ງໄວ້ ໃນວັນນັ້ນພຣະອົງຈະຊົງພິພາກສາໂລກຕາມຍຸດຕິທຳ ໂດຍມະນຸດຜູ້ໜຶ່ງ
ຊຶ່ງພຣະອົງໄດ້ຊົງຕັ້ງໄວ້ ແລະພຣະເຈົ້າໄດ້ຊົງໂຜດໃຫ້ຄົນທັງປວງມີຄວາມແນ່ໃຈໃນເລື່ອງນີ້
ໂດຍຊົງບັນດານໃຫ້ມະນຸດຜູ້ນັ້ນເປັນຄືນມາຈາກຕາຍ."
32ເມື່ອເຂົາໄດ້ຍິນຄຳຊຶ່ງວ່າ "ເປັນຄືນມາຈາກຕາຍ" ລາງຄົນກໍເຍາະເຍີ້ຍແຕ່ລາງຄົນກໍເວົ້າ
ວ່າ, "ພວກເຮົາຈະຄອຍຟັງທ່ານກ່າວເລື່ອງນີ້ອີກ." 33ດັ່ງນັ້ນໂປໂລຈຶ່ງໄດ້ອອກຈາກຖ້າມກາງ
ເຂົາໄປ. 34ແຕ່ມີຊາຍລາງຄົນໄດ້ຕິດພັນຢູ່ກັບໂປໂລແລະໄດ້ຮັບເຊື່ອ ໃນຄົນເຫລົ່ານັ້ນມີດີໂອນີ-
ຊີໂອ ຜູ້ເປັນສະມາຊິກສະພາອາເຣໂອປາໂຄ ກັບຍິງຄົນໜຶ່ງຊື່ດາມາຣີ ແລະຄົນອື່ນໆ ດ້ວຍ.

# ບົດທີ 18

## ໂປໂລທີ່ເມືອງໂກຣິນໂທ

1ຫລັງຈາກນັ້ນໂປໂລໄດ້ອອກຈາກກຸງອາແຖນໄປຍັງເມືອງໂກຣິນໂທ, 2ຈຶ່ງພົບຄົນຢິວຜູ້ໜຶ່ງ
ຊື່ອາກີລາ ຊຶ່ງເກີດຢູ່ເມືອງປົນໂຕ ແຕ່ຫາກໍມາຈາກປະເທດອີຕາເລຍກັບພັນລະຍາຊື່ປີຊະກີລາ
ເພາະຈັກກະພັດກະໂລດີໂອ ໄດ້ອອກດຳລັດ ສັ່ງໃຫ້ຊາວຢິວທັງປວງອອກໜີຈາກກຸງໂຣມ
ສ່ວນໂປໂລກໍໄປຫາເຂົາທັງສອງ. 3ເພາະມີອາຊີບຢ່າງດຽວກັນ ໂປໂລຈຶ່ງໄດ້ໄປອາໃສຢູ່ກັບເຂົາ
ທັງສອງຝ່າຍເປັນຊ່າງເຮັດຜ້າເຕັນ ເຂົາຈຶ່ງເຮັດການຮ່ວມກັນ. 4ທຸກວັນຊະບາໂຕໂປໂລເຄີຍ
ໂຈດຖຽງກັນໃນໂຮງທຳມະເທດສະໜາ ຊັກຊວນພວກຢິວທັງພວກກຣີກໃຫ້ເຊື່ອ.
5ແຕ່ເມື່ອຊີລາກັບຕີໂມທຽວລົງມາຈາກແຂວງມາເກໂດເນຍ ໂປໂລໄດ້ຕັ້ງຕົ້ນສະຫລະເວລາ
ທັງໝົດປະກາດພຣະທຳ ແລະເປັນພະຍານແກ່ພວກຢິວວ່າພຣະເຢຊູແມ່ນພຣະຄຣິດ. 6ແຕ່
ເມື່ອພວກເຫລົ່ານັ້ນຂັດຂວາງແລະກ່າວຄຳຫຍາບຊ້າ ໂປໂລຈຶ່ງສັ່ນເສື້ອຜ້າຕໍ່ເຂົາ ແລ້ວເວົ້າວ່າ,
"ໃຫ້ໂທດຂອງພວກທ່ານຕົກໃສ່ຫົວຂອງພວກທ່ານເອງ[ຂ] ຝ່າຍເຮົາ, ເຮົາບໍ່ມີໂທດ[ຄ] ຕັ້ງແຕ່ນີ້
ໄປເຮົາຈະໄປຫາພວກຕ່າງຊາດ." 7ທ່ານຈຶ່ງອອກຈາກທີ່ນັ້ນແລ້ວເຂົ້າໄປໃນເຮືອນຂອງຊາຍຜູ້
ໜຶ່ງຊື່ຕີໂຕຢູສະໂຕ ເປັນຄົນນັບຖືພຣະເຈົ້າ ເຮືອນຂອງທ່ານຢູ່ຖັດໂຮງທຳ. 8ຝ່າຍກີສະໂປ
ນາຍໂຮງທຳກັບທັງຄົວເຮືອນຂອງຕົນ ໄດ້ຮັບເຊື່ອໃນອົງພຣະຜູ້ເປັນເຈົ້າ ແລະຊາວໂກຣິນໂທ
ຫລາຍຄົນ ເມື່ອໄດ້ຟັງແລ້ວກໍໄດ້ເຊື່ອແລະຮັບບັບຕິສະມາ. 9ແລະອົງພຣະຜູ້ເປັນເຈົ້າໄດ້ຊົງ
ກ່າວກັບໂປໂລທາງນິມິດໃນກາງຄືນວ່າ, "ຢ່າຊູ່ຢ້ານ ແຕ່ຈົ່ງກ່າວຕໍ່ໄປ ຢ່າມິດຢູ່. 10ເພາະວ່າ
ຝ່າຍເຮົາ ເຮົາຢູ່ກັບເຈົ້າ ແລະຈະບໍ່ມີຜູ້ໜຶ່ງຜູ້ໃດໂຈມຕີທຳຮ້າຍເຈົ້າ ດ້ວຍວ່າພົນລະເມືອງຂອງ
ເຮົາໃນນະຄອນນີ້ກໍມີຫລາຍ." 11ຝ່າຍໂປໂລໄດ້ອາໃສຢູ່ປີໜຶ່ງກັບຫົກເດືອນ ສັ່ງສອນພຣະທຳ
ຂອງພຣະເຈົ້າຖ້າມກາງເຂົາ.
12ແຕ່ຄາວເມື່ອຄາລີໂອນເປັນຜູ້ປົກຄອງແຂວງອະຂາຢາ ພວກຢິວໄດ້ພາກັນລຸກຮື້ຂຶ້ນຕໍ່ສູ້

[ກ]ຫລື "ຊົງທຳເສີຍຄືບໍ່ຊົງເຫັນ." [ຂ]ແທນທີ່ຈະວ່າ "ໂທດ" ພາສາເດີມວ່າ "ເລືອດ" ເພື່ອໝາຍເຖິງຄວາມ
ຕາຍ. [ຄ]ແທນທີ່ຈະວ່າ "ບໍ່ມີໂທດ" ພາສາເດີມວ່າ "ກໍສະອາດ".

ໂປໂລ ແລະພາທ່ານໄປສານ. 13ຟ້ອງວ່າ, “ຄົນນີ້ຊັກຊວນຄົນທັງຫລາຍໃຫ້ນະມັດສະການ
ພຣະເຈົ້າຕາມທາງຜິດກົດໝາຍ.” 14ເມື່ອໂປໂລກຳລັງຈະອອກປາກ ຝ່າຍຄາລີໂອນກໍກ່າວແກ່
ຊາວຢິວວ່າ, “ໂອ ຊາວຢິວທັງຫລາຍ, ຖ້າເປັນເລື່ອງການຜິດຫລືການຊົ່ວຊ້າປະການໃດປະ-
ການໜຶ່ງ ສົມຄວນເຮົາຈະອົດຟັງພວກທ່ານ. 15ແຕ່ຖ້າເປັນການໂຕ້ຖຽງກັນເຖິງເລື່ອງຖ້ອຍ
ຄວາມກັບຊື່ຕ່າງໆ ແລະພຣະບັນຍັດຂອງພວກທ່ານແລ້ວ ກໍໃຫ້ເປັນທຸລະຂອງພວກທ່ານເອງ
ຝ່າຍເຮົາບໍ່ຢາກເປັນຜູ້ຕັດສິນໃນເລື່ອງຢ່າງນັ້ນ.” 16ທ່ານຈຶ່ງໄລ່ພວກນັ້ນອອກໄປຈາກສານ.
17ແລ້ວເຂົາພາກັນຈັບໂສດສະເທນນາຍໂຮງທຳໄປຂ້ຽນຕີຕໍ່ໜ້າສານ ສ່ວນຄາລີໂອນກໍບໍ່ເຂົ້າ
ຫຍຸ້ງກ່ຽວກັບການນັ້ນຈັກຢ່າງ.

## ໂປໂລກັບຄືນເມືອງອັນຕີໂອເຂຍ

18ສ່ວນໂປໂລ ເມື່ອໄດ້ພັກຢູ່ກັບພວກພີ່ນ້ອງອີກຫລາຍວັນສົມຄວນ ກໍໄດ້ລາຈາກເຂົາຈຶ່ງລົງ
ເຮືອສະເພົາເດີນທາງໄປສູ່ແຂວງຊີເຣຍ ແລະປີຊະກີລາກັບອາກີລາກໍໄປນຳຢູ່ທີ່ເມືອງເກັນເຂ-
ອາຍທ່ານໄດ້ແຖຫົວເພາະບະບົນຕົວໄວ້. 19ເມື່ອເຂົາມາເຖິງເມືອງເອເຟໂຊ ໂປໂລໄດ້ປະປີຊະ-
ກີລາກັບອາກີລາໄວ້ທີ່ນັ້ນ ແຕ່ທ່ານເອງໄດ້ເຂົ້າໄປໂຈດຖຽງກັບພວກຢິວໃນໂຮງທຳ. 20ເມື່ອ
ຄົນເຫລົ່ານັ້ນຂໍໃຫ້ທ່ານຢູ່ຕໍ່ໄປທ່ານກໍບໍ່ຍອມ. 21ແຕ່ໄດ້ລາເຂົາໄປໂດຍເວົ້າວ່າ, “ຖ້າພຣະເຈົ້າ
ຊົງເຫັນຊອບເຮົາຈະກັບມາຫາພວກທ່ານອີກ” ແລ້ວທ່ານໄດ້ຈາກເມືອງເອເຟໂຊໄປທາງເຮືອ
ສະເພົາ. 22ເມື່ອຈອດທີ່ເມືອງກາຍຊາເຣຍແລ້ວທ່ານໄດ້ຂຶ້ນເມືອຄຳນັບຄຣິສຕະຈັກ[ກ] ຈຶ່ງໄດ້ລົງ
ໄປຍັງເມືອງອັນຕີໂອເຂຍ. 23ເມື່ອພັກຢູ່ທີ່ນັ້ນຈັກຫວ່າງໜຶ່ງແລ້ວ ທ່ານໄດ້ອອກໄປຜ່ານແຂວງ
ຄາລາເຕຍແລະຟີເຄຍຕາມລຳດັບ ເພື່ອຊ່ອຍຊູກຳລັງພວກສິດ.

## ອາໂປໂລທີ່ເມືອງເອເຟໂຊ

24ມີຄົນຢິວຜູ້ໜຶ່ງຊື່ອາໂປໂລ ເກີດໃນເມືອງອາເລັກຊັນເດຍ ເປັນຄົນມີໂວຫານດີແລະຊຳ-
ນານຫລາຍໃນທາງພຣະຄຳພີ ທ່ານຜູ້ນີ້ມາຍັງເມືອງເອເຟໂຊ. 25ອາໂປໂລນີ້ໄດ້ຮັບການອົບຮົມ
ໃນທາງຂອງອົງພຣະຜູ້ເປັນເຈົ້າ ແລະມີໃຈຮ້ອນຮົນກ່າວສັ່ງສອນເຖິງເລື່ອງພຣະເຢຊູຢ່າງຖືກ-
ຕ້ອງ ເຖິງປານນັ້ນທ່ານກໍຮູ້ແຕ່ບັບຕິສະມາຂອງໂຢຮັນເທົ່ານັ້ນ. 26ທ່ານຜູ້ນີ້ໄດ້ກ່າວສັ່ງສອນ
ດ້ວຍໃຈກ້າຫານໃນໂຮງທຳ ແຕ່ເມື່ອປີຊະກີລາແລະອາກີລາໄດ້ຟັງທ່ານແລ້ວ ເຂົາຈຶ່ງຕ້ອນຮັບ
ທ່ານມາອະທິບາຍໃຫ້ຮູ້ທາງຂອງພຣະເຈົ້າຢ່າງຖືກຕ້ອງຫລາຍຂຶ້ນ. 27ເມື່ອທ່ານຕັດສິນໃຈຈະ
ຂ້າມໄປຍັງແຂວງອະຂາຢາ ພວກພີ່ນ້ອງໄດ້ໜູນໃຈທ່ານ ແລະຂຽນຈົດໝາຍຝາກໄປເຖິງພວກ
ສິດທີ່ນັ້ນໄດ້ຕ້ອນຮັບທ່ານໄວ້ ຄັນທ່ານໄປເຖິງແລ້ວ ທ່ານກໍຊ່ອຍເຫລືອຄົນທັງຫລາຍທີ່ໄດ້ເຊື່ອ
ຍ້ອນພຣະຄຸນຂອງພຣະເຈົ້າຢ່າງຫລວງຫລາຍ. 28ເພາະທ່ານໄດ້ໂຕ້ຖຽງກັບພວກຢິວຢ່າງ
ແຂງແຮງຕໍ່ໜ້າຄົນທັງຫລາຍ ແລະຊີ້ຍົກຫລັກໃນພຣະຄຳພີອ້າງໃຫ້ເຫັນວ່າພຣະເຢຊູແມ່ນ
ພຣະຄຣິດ.

---

[ກ]ຄືດວ່າ ໝາຍເຖິງຄຣິສຕະຈັກຢູ່ກຸງເຢຣູຊາເລັມ.

# ບົດທີ 19

## ໂປໂລທີ່ເມືອງເອເຟໂຊ

1ຂະນະທີ່ ອາໂປໂລ ຍັງຢູ່ເມືອງ ໂກຣິນໂທ ໂປໂລ ໄດ້ເດີນທາງຜ່ານເຂດພາກເໜືອແລະກໍມາ
ເຖິງເມືອງ ເອເຟໂຊ ທີ່ນັ້ນທ່ານໄດ້ພົບລູກສິດລາງຄົນ. 2ຈຶ່ງຖາມເຂົາວ່າ, “ເມື່ອທ່ານທັງຫລາຍ
ເຊື່ອນັ້ນ ພວກທ່ານໄດ້ຮັບ ພຣະວິນຍານບໍລິສຸດຫລືບໍ່” ເຂົາຕອບວ່າ, “ບໍ່ ທີ່ວ່າມີພຣະວິນຍານ-
ບໍລິສຸດນັ້ນກໍບໍ່ເຄີຍໄດ້ຍິນ.” 3ໂປໂລ ຈຶ່ງຖາມເຂົາວ່າ, ຖ້າຢ່າງນັ້ນພວກທ່ານໄດ້ຮັບບັບຕິສະມາ
ແນວໃດ ເຂົາຕອບວ່າ, “ບັບຕິສະມາຂອງ ໂຢຮັນ.” 4ແລ້ວ ໂປໂລ ຈຶ່ງບອກວ່າ, “ໂຢຮັນ ໃຫ້ບັບຕິ-
ສະມາກ່ຽວກັບເລື່ອງການຖິ້ມໃຈເກົ່າເອົາໃຈໃໝ່ ໂດຍບອກແກ່ພົນລະເມືອງໃຫ້ເຊື່ອຜູ້ທີ່ຈະມາ
ພາຍຫລັງຕົນ ຄືເຊື່ອໃນ ພຣະເຢຊູ.” 5ເມື່ອໄດ້ຍິນດັ່ງນັ້ນ ເຂົາຈຶ່ງຮັບບັບຕິສະມາໃນພຣະນາມ
ຂອງ ພຣະເຢຊູເຈົ້າ. 6ເມື່ອ ໂປໂລ ໄດ້ວາງມືໃສ່ເຂົາແລ້ວ ພຣະວິນຍານບໍລິສຸດກໍສະເດັດມາເທິງ
ເຂົາ ເຂົາຈຶ່ງຕັ້ງຕົ້ນປາກພາສາແປກໆ ແລະໄດ້ທຳນວາຍ. 7ຊາຍເຫລົ່ານັ້ນມີປະມານສິບສອງ
ຄົນ.

8ຝ່າຍ ໂປໂລ ໄດ້ເຂົ້າໄປກ່າວສັ່ງສອນໃນ ໂຮງທຳດ້ວຍໃຈກ້າໃນລະຫວ່າງສາມເດືອນ ໂຈດ
ຖຽງແລະຊັກຊວນໃຫ້ເຊື່ອໃນສິ່ງທີ່ກ່າວເຖິງລາຊະແຜ່ນດິນຂອງ ພຣະເຈົ້າ. 9ແຕ່ລາງຄົນມີໃຈ
ແຂງກະດ້າງບໍ່ຍອມເຊື່ອ ແລະກ່າວຫຍາບຊ້າເລື່ອງທາງນັ້ນຕໍ່ໜ້າຄົນທັງຫລາຍ ໂປໂລຈຶ່ງແຍກ
ອອກຈາກເຂົາແລະຄັດເອົາພວກລູກສິດໄປນຳ ແລະທ່ານໄດ້ໂຕ້ຖຽງໃນຫ້ອງປະຊຸມຂອງທ່ານ
ຕີຣາໂນ ທຸກໆ ວັນ. 10ການນີ້ມີຢູ່ເປັນເວລາສອງປີ ຈົນວ່າຄົນທັງຫລາຍທີ່ອາໃສຢູ່ໃນແຂວງ
ອາເຊຍ ທັງພວກຢິວ ແລະພວກ ກຣີກ ໄດ້ຍິນພຣະທຳຂອງອົງ ພຣະຜູ້ເປັນເຈົ້າ.

## ພວກລູກຊາຍຂອງຊະເກວາ

11ພຣະເຈົ້າຊົງບັນດານໃຫ້ ໂປໂລ ເຮັດການອິດທິລິດອັນແປກປະຫລາດ, 12ຈົນເຂົາໄດ້ນຳເອົາ
ຜ້າເຊັດເຫື່ອກັບຜ້າກັ້ນເປື້ອນ ຈາກຕົວຂອງ ໂປໂລ ໄປວາງໃສ່ຄົນປ່ວຍໄຂ້ພະຍາດຕ່າງໆ ກໍ
ຫາຍແລະຜີຮ້າຍກໍອອກໄປ. 13ແຕ່ພວກຢິວບາງຄົນທີ່ທ່ຽວໄປເປັນໝໍໄລ່ຜີ ພະຍາຍາມໃຊ້ພຣະ-
ນາມຂອງ ພຣະເຢຊູເຈົ້າ ຂັບໄລ່ຜີວ່າ, “ກູບັງຄັບສູໂດຍ ພຣະເຢຊູ ຊຶ່ງ ໂປໂລ ປະກາດນັ້ນ.” 14ອັນ
ໜຶ່ງມີຢິວຜູ້ໜຶ່ງຊື່ ຊະເກວາ ເປັນປະໂລຫິດຕົນໃຫຍ່ ມີລູກຊາຍເຈັດຄົນທີ່ເຮັດການຢ່າງນັ້ນ.
15ສ່ວນຜີຮ້າຍໄດ້ຕອບເຂົາວ່າ, “ພຣະເຢຊູ ເຮົາກໍລື້ງເຄີຍ ໂປໂລ ເຮົາກໍຮູ້ຈັກ ແຕ່ພວກເຈົ້າເປັນຜູ້
ໃດ.” 16ຄົນທີ່ມີຜີສິງຢູ່ນັ້ນໄດ້ໂດດໃສ່ເຂົາແລະໃຊ້ອຳນາດຊະນະເຂົາໄດ້ ຈົນເຂົາປົບໜີອອກ
ຈາກເຮືອນຕົວເປົ່າແລະເປັນບາດ. 17ເລື່ອງນີ້ກໍໄດ້ລືກັນໄປເຖິງຫູຄົນທັງປວງທີ່ຢູ່ໃນເມືອງ ເອ-
ເຟໂຊ ທັງພວກຢິວ ແລະພວກ ກຣີກ ແລະຄົນທັງປວງກໍພາກັນມີຄວາມຢ້ານກົວ ແລະພຣະ-
ນາມຂອງ ພຣະເຢຊູເຈົ້າ ກໍເປັນທີ່ຍົກຍໍສັລະເສີນ. 18ມີຫລາຍຄົນທີ່ເຊື່ອແລ້ວໄດ້ມາສາລະພາບ
ແລະເປີດເຜີຍການທີ່ເຂົາເຄີຍເຮັດ. 19ມີຫລາຍຄົນທີ່ໃຊ້ເວດມົນຄາຖາໄດ້ເອົາຕຳລາຂອງຕົນມາ
ເຜົາໄຟເສຍຕໍ່ໜ້າຄົນທັງປວງ ຕຳລາເຫລົ່ານັ້ນຄິດລາຄາເປັນຫ້າໝື່ນຫລຽນ[ກ] . 20ດັ່ງນີ້ແຫລະ,
ພຣະທຳຂອງອົງ ພຣະຜູ້ເປັນເຈົ້າ ຈຶ່ງບັງເກີດຜົນຈະເລີນຂຶ້ນ ແລະມີໄຊຊະນະຢູ່ດ້ວຍລິດ.

---

[ກ]ເງິນຫລຽນນີ້ມີນ້ຳໜັກປະມານສິບສີ່ກະລາມເຄິ່ງ.

21ພາຍຫລັງ ເຫດການ ເຫລົ່ານີ້ ໂປໂລ ຕັດສິນໃຈ[ກ] ວ່າຈະໄປຍັງກຸງ ເຢຣູຊາເລັມ ໂດຍຜ່ານ
ແຂວງ ມາເກໂດເນຍ ແລະແຂວງ ອະຂາຢາ ໂດຍເວົ້າວ່າ, "ເມື່ອໄດ້ໄປທາງນັ້ນຈະຕ້ອງໄດ້ເຫັນ
ກຸງໂຣມ ເໝືອນກັນ." 22ທ່ານຈຶ່ງໃຊ້ຜູ້ຊ່ອຍຂອງຕົນສອງຄົນ ຄືຕີໂມທຽວກັບ ເອຣາຊະໂຕ ໄປ
ຍັງແຂວງ ມາເກໂດເນຍ ຝ່າຍທ່ານເອງກໍຍັງພັກຢູ່ຫວ່າງໜຶ່ງທີ່ແຂວງ ອາເຊຍ.

## ການອົນລະຫົນວຸ້ນວາຍທີ່ເມືອງເອເຟໂຊ

23ໃນຄາວນັ້ນໄດ້ເກີດການວຸ້ນວາຍອັນໃຫຍ່ກ່ຽວເລື່ອງທາງນັ້ນ. 24ດ້ວຍມີຄົນໜຶ່ງຊື່ ເດເມທີ-
ໂອ ເປັນຊ່າງເງິນ ໄດ້ເອົາເງິນເຮັດຮູບວິຫານຂອງພະ ອາເຕມິດ ເປັນເຫດໃຫ້ພວກຊ່າງໄດ້ມີງານ
ຫລວງຫລາຍ. 25ດັ່ງນັ້ນ ເດເມທີໂອ ຈຶ່ງເອີ້ນບັນດານາຍຊ່າງ ແລະຄົນທີ່ເຮັດການຄ້າຍຄືກັນມາ
ປະຊຸມ ແລ້ວກ່າວວ່າ, "ທ່ານທັງຫລາຍເອີຍ, ພວກທ່ານຊາບຢູ່ວ່າ ພວກເຮົາໄດ້ຊັບສິນເງິນ
ທອງມາກໍເພາະເຮັດການນີ້. 26ແລະທ່ານທັງຫລາຍໄດ້ຮູ້ເຫັນຢູ່ວ່າບໍ່ແມ່ນຈຳເພາະໃນເມືອງ ເອ-
ເຟໂຊ ເມືອງດຽວ ແຕ່ເກືອບທົ່ວແຂວງ ອາເຊຍ ໂປໂລ ຜູ້ນີ້ໄດ້ຊັກຊວນຄົນຫລາຍສົມຄວນໃຫ້ຫລົງ
ໄປ ໂດຍກ່າວວ່າ 'ພະທີ່ສ້າງຂຶ້ນດ້ວຍມືມະນຸດນັ້ນ ບໍ່ແມ່ນ ພຣະເຈົ້າ ແທ້ໆ.' 27ເປັນໜ້າຢ້ານວ່າ
ບໍ່ແມ່ນແຕ່ອາຊີບຂອງພວກເຮົາຈະເສຍຊື່ສຽງຢ່າງດຽວ ແຕ່ພຣະວິຫານກັບສະຖານທີ່ນະມັດສະ-
ການຂອງພຣະມະຫາ ອາເຕມິດ ຈະຖືກໝິ່ນປະໝາດເໝືອນກັນ ແລະນາງພຣະນັ້ນຊຶ່ງເປັນທີ່
ນັບຖືຂອງບັນດາຊາວ ອາເຊຍ ກັບໝົດທັງໂລກຈະຕົກຕ່ຳຈົນສິ້ນສະຫງ່າລາສີ."

28ຄົນທັງຫລາຍໄດ້ຍິນດັ່ງນັ້ນກໍພາກັນຄຽດແຄ້ນ ແລະຮ້ອງຂຶ້ນວ່າ, "ພະ ອາເຕມິດ ຂອງຊາວ
ເອເຟໂຊ ເປັນໃຫຍ່." 29ແລ້ວໄດ້ເກີດອົນລະຫົນວຸ້ນວາຍຂຶ້ນທົ່ວທັງເມືອງ ເຂົາໄດ້ຈັບເອົາ ຄາໂຢ
ກັບ ອາຣິດຕາໂຂ ຊາວ ມາເກໂດເນຍ ຜູ້ເປັນເພື່ອນເດີນທາງຮ່ວມກັບ ໂປໂລ ດຶງລາກແລ່ນເຂົ້າ
ໄປໃນສະໜາມລະຄອນ. 30ຝ່າຍ ໂປໂລ ມີໃຈຢາກເຂົ້າໄປໃນທ່າມກາງປະຊາຊົນ ແຕ່ພວກລູກ-
ສິດບໍ່ຍອມໃຫ້ໄປ. 31ມີລາງຄົນໃນພວກຜູ້ປົກຄອງ ແຂວງ ອາເຊຍ ເໝືອນກັນ ຊຶ່ງເປັນສະຫາຍ
ຂອງ ໂປໂລ ໄດ້ໃຊ້ຄົນໄປອ້ອນວອນຂໍຫ້າມບໍ່ໃຫ້ ໂປໂລ ເຂົ້າໄປໃນສະໜາມລະຄອນ. 32ອັນໜຶ່ງ,
ຄົນທັງຫລາຍຕ່າງຄົນຕ່າງຮ້ອງຂຶ້ນ ເພາະວ່າທີ່ປະຊຸມວຸ້ນວາຍຫລາຍ ແລະຄົນສ່ວນຫລາຍບໍ່ໄດ້
ຮູ້ວ່າເຂົາມາປະຊຸມກັນດ້ວຍເລື່ອງໃດ. 33ມີລາງຄົນໃນພວກເຫລົ່ານັ້ນໄດ້ແນະນຳອາເລັກຊັນໂດ
ຊຶ່ງເປັນຄົນທີ່ພວກຢິວໃຫ້ອອກໄປຂ້າງໜ້າ ອາເລັກຊັນໂດ ຈຶ່ງກວັກມືໝາຍຈະກ່າວແກ້ແທນຕໍ່-
ໜ້າປະຊາຊົນ. 34ແຕ່ເມື່ອເຂົາສັງເກດຮູ້ວ່າທ່ານເປັນຄົນຢິວ ເຂົາທັງປວງຈຶ່ງຮ້ອງເປັນສຽງດຽວ
ກັນຢູ່ປະມານສອງຊົ່ວໂມງວ່າ, "ພຣະ ອາເຕມິດ ຂອງຊາວ ເອເຟໂຊ ເປັນໃຫຍ່." 35ເມື່ອເລຂາທິ-
ການເທດສະບານໄດ້ໃຫ້ປະຊາຊົນງຽບລົງແລ້ວຈຶ່ງກ່າວວ່າ, "ຊາວ ເອເຟໂຊທັງຫລາຍເອີຍ, ມີຜູ້
ໃດໜໍທີ່ບໍ່ຮູ້ວ່າ ຊາວ ເອເຟໂຊນີ້ເປັນຜູ້ຮັກສາດູແລວິຫານຂອງນາງພຣະມະຫາ ອາເຕມິດ ແລະ
ສິ່ງສັກສິດທີ່ຕົກມາຈາກຟ້າ. 36ບັດນີ້ດ້ວຍການທັງຫລາຍອັນຖຽງບໍ່ໄດ້ນີ້ ທ່ານທັງຫລາຍຄວນ
ສະຫງົບລົງ ຢ່າເຮັດອັນໃດດ້ວຍຮີບຮ້ອນ. 37ດ້ວຍວ່າພວກທ່ານໄດ້ນຳເອົາຄົນເຫລົ່ານີ້ມາ ກໍບໍ່
ແມ່ນເຂົາເປັນຄົນປຸ້ນວິຫານ ຫລືໝິ່ນປະໝາດນາງພະຂອງພວກເຮົາ. 38ເຫດສັນນີ້ຖ້າແມ່ນ ເດ-
ເມທີໂອ ກັບພວກຊ່າງທີ່ມີອາຊີບຢ່າງດຽວກັນເປັນຄວາມກັບຜູ້ໃດ ວັນກຳນົດທີ່ຈະວ່າຄວາມກໍມີ,

---

[ກ]ຫລື "ຕັ້ງໃຈດ້ວຍພຣະວິນຍານ."

ຜູ້ປົກຄອງບ້ານເມືອງກໍມີ ໃຫ້ເຂົາມາຟ້ອງກັນສາ. [39]ແຕ່ຖ້າພວກທ່ານມີຂໍ້ຫາອັນໃດອີກ ກໍໃຫ້
ຊໍາລະກັນໃນທີ່ປະຊຸມສາມັນ. [40]ເພາະໜ້າຢ້ານວ່າພວກເຮົາຈະຖືກຟ້ອງວ່າເປັນຜູ້ກໍ່ຄວາມວຸ້ນ-
ວາຍຂຶ້ນໃນວັນນີ້ ເພາະພວກເຮົາບໍ່ອາດຍົກຂໍ້ໃດມາອ້າງເປັນສາຍເຫດພໍແກ່ການວຸ້ນວາຍນີ້."
[41]ເມື່ອກ່າວດັ່ງນີ້ແລ້ວທ່ານກໍສັ່ງໃຫ້ເລີກປະຊຸມ.

# ບົດທີ 20

## ໂປໂລໄປຍັງແຂວງມາເກໂດເນຍແລະປະເທດກຣີກ

[1]ເມື່ອການວຸ້ນວາຍສະຫງົບລົງແລ້ວ ໂປໂລ ໄດ້ເອີ້ນພວກສິດມາ ຈຶ່ງກ່າວໜູນນໍ້າໃຈເຂົາ ແລ້ວ
ລາອອກເດີນທາງໄປຍັງແຂວງ ມາເກໂດເນຍ. [2]ເມື່ອຜ່ານເຂດນັ້ນໄປທ່ານໄດ້ກ່າວໜູນນໍ້າໃຈ
ເຂົາຫລາຍຢ່າງ ແລ້ວກໍມາເຖິງປະເທດ ກຣີກ. [3]ທ່ານໄດ້ພັກຢູ່ທີ່ນັ້ນສາມເດືອນ ເມື່ອທ່ານຈວນ
ຈະລົງເຮືອໄປຍັງແຂວງຊີເຣຍ ພວກຢິວໄດ້ຄິດປອງຮ້າຍໃສ່ທ່ານ ແລ້ວທ່ານຈຶ່ງໄດ້ຕັ້ງໃຈຈະ
ກັບຄືນໄປທາງຜ່ານແຂວງ ມາເກໂດເນຍ. [4]ຄົນທີ່ໄປກັບ ໂປໂລຄື ໂຊປາໂທ ລູກຊາຍຂອງ ປີໂຣ
ໄທເມືອງ ເບເຣຍ, ອາຣິດຕາໂຂ ກັບ ເຊກູນໂດ ໄທເມືອງ ເທຊະໂລນິກ, ຄາໂຢ ໄທເມືອງ ເດຣະ-
ເບ, ແລະຕີໂມທຽວ, ຕີຂີໂກ ກັບ ໂທຟີໂມ ຊາວແຂວງອາເຊຍ. [5]ຄົນເຫລົ່ານີ້ໄດ້ລ່ວງໜ້າໄປກ່ອນ
ແລະຄອຍຖ້າພວກເຮົາຢູ່ເມືອງ ໂທອາດ. [6]ເມື່ອວັນເທດສະການເຂົ້າຈີ່ບໍ່ມີເຊື້ອລ່ວງໄປແລ້ວ
ຝ່າຍພວກເຮົາໄດ້ອອກຈາກເມືອງ ຟີລິບປອຍ ໄປທາງເຮືອສະເພົາ ໃນລະຫວ່າງຫ້າວັນກໍມາເຖິງ
ຄົນເຫລົ່ານັ້ນທີ່ເມືອງ ໂທອາດ ແລະໄດ້ພັກຢູ່ທີ່ນັ້ນເຈັດວັນ.

## ໂປໂລຢ້ຽມຢາມເມືອງໂທອາດເປັນເທື່ອສຸດທ້າຍ

[7]ໃນວັນຕົ້ນສັບປະດາພວກເຮົາໄດ້ປະຊຸມກັນທໍາພິທີຫັກເຂົ້າຈີ່ ໂປໂລ ໄດ້ສົນທະນາປາໄສກັບ
ເຂົາ ເພາະວ່າວັນໜ້ານັ້ນໝາຍໃຈຈະລາເຂົາໄປ ທ່ານໄດ້ກ່າວຍືດຍາວໄປຈົນເຖິງທ່ຽງຄືນ. [8]ໃນ
ຫ້ອງຊັ້ນເທິງທີ່ພວກເຮົາປະຊຸມກັນນັ້ນມີໂຄມໄຟຫລາຍໜ່ວຍ. [9]ແລະມີຊາຍໜຸ່ມຜູ້ໜຶ່ງຊື່ຢູຕີໂຂ
ນັ່ງຢູ່ທີ່ປ່ອງຢ້ຽມເຫງົານອນເຕັມທີແລະເນື່ອງຈາກ ໂປໂລ ກ່າວດົນໄປຄົນນັ້ນທົນຕໍ່ຄວາມເຫງົາ-
ນອນບໍ່ໄດ້ ຈຶ່ງຫລັບໄປເລີຍຕົກລົງຈາກຊັ້ນທີສາມ ເມື່ອເຂົາຍົກຂຶ້ນກໍເຫັນວ່າຕາຍເສຍແລ້ວ.
[10]ຝ່າຍ ໂປໂລ ໄດ້ລົງໄປກົ້ມຕົວກອດຜູ້ນັ້ນແລ້ວເວົ້າວ່າ, "ຢ່າວຸ້ນວາຍໃຈເພາະຊີວິດຍັງຢູ່ໃນຕົວ
ລາວ." [11]ຄັນ ໂປໂລ ຂຶ້ນເມືອແລະຫັກເຂົ້າຈີ່ຮັບປະທານແລ້ວ ກໍສົນທະນາກັບເຂົາຕໍ່ໄປອີກດົນ
ນານສົມຄວນຈົນເຖິງຮຸ່ງເຊົ້າ ແລ້ວທ່ານໄດ້ຈາກເຂົາໄປ. [12]ແລ້ວເຂົາໄດ້ນໍາເອົາຊາຍໜຸ່ມຜູ້ຍັງ
ເປັນຢູ່ນັ້ນໄປ ໂດຍມີຄວາມຍິນດີບໍ່ໃຊ້ໜ້ອຍ.

## ໂປໂລເດີນທາງຈາກເມືອງໂທອາດໄປເຖິງເມືອງມີເລໂຕ

[13]ຝ່າຍພວກເຮົາໄດ້ລົງເຮືອກ່ອນຈຶ່ງເດີນທາງນໍ້າໄປເຖິງເມືອງອາໂຊ ໝາຍໃຈວ່າຈະຮັບໂປ-
ໂລຂຶ້ນເຮືອທີ່ນັ້ນ ດ້ວຍວ່າທ່ານເອງໄດ້ຈັດໄວ້ດັ່ງນັ້ນ ເພາະທ່ານໝາຍໃຈວ່າຈະໄປທາງບົກ.
[14]ຄັນທ່ານພົບພວກເຮົາທີ່ເມືອງອາໂຊແລ້ວ ພວກເຮົາກໍຮັບທ່ານຂຶ້ນເຮືອມາຍັງເມືອງມີເຕເລເນ.
[15]ຄັນອອກຈາກທີ່ນັ້ນວັນໜຶ່ງແລ້ວ ກໍມາເຖິງບ່ອນທີ່ຢູ່ຊື່ກັບເກາະຂີໂອ ວັນທີສອງ ກໍມາຈອດທີ່
ເກາະຊາໂມ ແລະອີກວັນໜຶ່ງກໍມາເຖິງເມືອງມີເລໂຕ. [16]ດ້ວຍ ໂປໂລ ໄດ້ຕັ້ງໃຈວ່າຈະກາຍເມືອງ

ເອເຟໂຊ ໄປເພື່ອບໍ່ໃຫ້ຄ້າງຢູ່ເຫິງໃນແຂວງອາເຊຍ ເພາະທ່ານຟ້າວຢາກໃຫ້ເຖິງກຸງ ເຢຣູຊາເລັມ
ຖ້າເປັນໄດ້, ກໍໃຫ້ທັນວັນເທດສະການ ເພັນເຕຄໍສະເຕ.

## ໂປໂລກ່າວຄຳປາໄສເປັນເທື່ອສຸດທ້າຍຕໍ່ພວກເຖົ້າແກ່ທີ່ເມືອງເອເຟໂຊ

17ໂປໂລ ຈຶ່ງໃຊ້ຄົນຈາກເມືອງ ມີເລໂຕ ໄປຍັງເມືອງ ເອເຟໂຊ ເຊີນເອົາພວກເຖົ້າແກ່ໃນຄຣິສ-
ຕະຈັກນັ້ນມາ.

18ເມື່ອເຂົາມາເຖິງ ໂປໂລຈຶ່ງກ່າວວ່າ, "ຝ່າຍທ່ານທັງຫລາຍກໍຊາບຢູ່ແລ້ວວ່າ ຕັ້ງແຕ່ວັນທຳ-
ອິດທີ່ເຮົາຍ່າງເຂົ້າມາໃນແຂວງອາເຊຍ ທຸກເວລາທີ່ເຮົາຢູ່ກັບພວກທ່ານເຮົາໄດ້ເຮັດແນວໃດ.
19ເຮົາໄດ້ຮັບໃຊ້ອົງພຣະຜູ້ເປັນເຈົ້າດ້ວຍການຖ່ອມໃຈທຸກຢ່າງ, ດ້ວຍນ້ຳຕາໄຫລ, ແລະດ້ວຍ
ການຖືກທົດລອງທີ່ບັງເກີດແກ່ເຮົາ ດ້ວຍພວກຢິວຄິດປອງຮ້າຍຕໍ່ເຮົາ. 20ສິ່ງໜຶ່ງສິ່ງໃດອັນເປັນ
ຄຸນປະໂຫຍດແກ່ພວກທ່ານ ເຮົາບໍ່ໄດ້ທໍ້ຖອຍຈາກການປະກາດແລະສັ່ງສອນພວກທ່ານ ໃນທີ່
ປະຊຸມແລະຕາມບ້ານຕາມເຮືອນ. 21ທັງເຕືອນສະຕິຢ່າງໜັກແໜ້ນໃຫ້ພວກຢິວ ແລະພວກກຣີກ
ເຖິງເລື່ອງການຖິ້ມໃຈເກົ່າເອົາໃຈໃໝ່ຈຳເພາະພຣະເຈົ້າ ແລະຄວາມເຊື່ອຈຳເພາະພຣະເຢຊູເຈົ້າ
ຂອງພວກເຮົາ. 22ແລະເບິ່ງແມ ບັດນີ້ພຣະວິນຍານຜູກພັນເຮົາ[ກ] ຈຶ່ງຈຳເປັນຈະຕ້ອງຂຶ້ນເມືອ
ກຸງ ເຢຣູຊາເລັມ ແລະບໍ່ຮູ້ວ່າຈະມີອັນໃດບັງເກີດແກ່ເຮົາທີ່ນັ້ນ. 23ເວັ້ນໄວ້ແຕ່ພຣະວິນຍານບໍລິ-
ສຸດ ຊົງເຕືອນສະຕິເຮົາໃນທຸກໆ ບ້ານທຸກໆ ເມືອງວ່າ ເຄື່ອງຜູກມັດແລະຄວາມທຸກລຳບາກ
ຄອຍຖ້າເຮົາຢູ່. 24ແຕ່ເຮົາບໍ່ໄດ້ຖືວ່າຊີວິດຂອງເຮົາເປັນຂອງມີຄ່າແກ່ເຮົາຢ່າງໃດເພື່ອເຮົາຈະເຮັດ
ໜ້າທີ່ຂອງເຮົາ ແລະຈະໄດ້ປະຕິບັດງານທີ່ໄດ້ຮັບມອບໝາຍຈາກອົງພຣະຜູ້ເປັນເຈົ້າໃຫ້ສຳເລັດ
ຄືທີ່ຈະເປັນພະຍານຢ່າງຄົບຖ້ວນເຖິງເລື່ອງຂ່າວປະເສີດກ່ຽວກັບພຣະຄຸນຂອງພຣະເຈົ້ານັ້ນ.

25ແລະເບິ່ງແມ, ເຮົາຜູ້ທີ່ທ່ຽວໄປປະກາດເລື່ອງລາຊະອານາຈັກຂອງພຣະເຈົ້າໃນຖ້າມກາງ
ທ່ານທັງຫລາຍນັ້ນ ບັດນີ້ເຮົາຊາບຢູ່ວ່າຝ່າຍພວກທ່ານຈະບໍ່ເຫັນໜ້າເຮົາອີກຕໍ່ໄປ. 26ເຫດສັນ-
ນັ້ນ, ວັນນີ້ເຮົາຢືນຢັນຕໍ່ທ່ານທັງຫລາຍວ່າ ເຮົາບໍ່ມີໂທດໃນຊາຕາກຳຂອງທ່ານທຸກຄົນ[ຂ] .
27ດ້ວຍວ່າເຮົາບໍ່ໄດ້ທໍ້ຖອຍຈາກການປະກາດພຣະປະສົງຂອງພຣະເຈົ້າ ໃຫ້ພວກທ່ານຮູ້.
28ທ່ານທັງຫລາຍຈົ່ງລະວັງຕົວເອງໃຫ້ດີ ແລະລະວັງຮັກສາຝູງແກະທີ່ພຣະວິນຍານບໍລິສຸດ ໄດ້
ຊົງຕັ້ງພວກທ່ານໄວ້ໃຫ້ເປັນຜູ້ດູແລເພື່ອບຳລຸງລ້ຽງຄຣິສຕະຈັກຂອງພຣະເຈົ້າທີ່ພຣະອົງຊົງໄຖ່
ມາດ້ວຍພຣະໂລຫິດຂອງພຣະອົງເອງ.[ຄ] 29ເຮົາຮູ້ຢູ່ວ່າເມື່ອເຮົາຈາກໄປແລ້ວ ຈະມີໝາໄນຕົວ
ຮ້າຍເຂົ້າມາໃນຖ້າມກາງພວກທ່ານ ມັນຈະບໍ່ເວັ້ນຊີວິດຂອງຝູງແກະ. 30ຈະມີຊາຍລາງຄົນເກີດ
ມາຈາກພວກທ່ານເອງກ່າວປີ້ນຄວາມຈິງ ເພື່ອຊັກຊວນພວກສິດໃຫ້ຫລົງຕາມເຂົາໄປ. 31ເຫດ
ສັນນັ້ນຈົ່ງເຝົ້າລະວັງແລະຈື່ຈຳໄວ້ວ່າ ໃນລະຫວ່າງສາມປີທັງກາງເວັນແລະກາງຄືນ ເຮົາບໍ່ໄດ້
ຢຸດຢ່ອນໃນການເຕືອນສະຕິທ່ານທຸກຄົນດ້ວຍນ້ຳຕາໄຫລ. 32ເຫດສັນນັ້ນ, ບັດນີ້ເຮົາຝາກທ່ານ
ທັງຫລາຍໄວ້ກັບພຣະເຈົ້າ ແລະກັບພຣະທຳອັນປະກອບດ້ວຍພຣະຄຸນຂອງພຣະອົງ ຊຶ່ງມີລິດ
ອາດສາມາດສ້າງພວກທ່ານຂຶ້ນໄດ້ ແລະໃຫ້ພວກທ່ານໄດ້ຮັບມໍລະດົກດ້ວຍກັນກັບບັນດາຜູ້ຖືກ

---

[ກ]ຫລື "ບັດນີ້ເຮົາຖືກຜູກພັນໃນວິນຍານຈິດຈຶ່ງຈຳເປັນ..." [ຂ]ພາສາເດີມວ່າ "ເຮົາກໍສະອາດຈາກເລືອດ
ຂອງທ່ານທຸກຄົນແລ້ວ." [ຄ]ຫລືວ່າ "ດ້ວຍພຣະໂລຫິດພຣະບຸດຂອງພຣະອົງ."

ຊົງຊຳລະໃຫ້ບໍລິສຸດ. [33]ເຮົາບໍ່ໄດ້ໂລບເອົາເງິນ, ເອົາຄຳ, ຫລືເສື້ອຜ້າຂອງຜູ້ໃດ. [34]ຝ່າຍທ່ານ
ທັງຫລາຍກໍຊາບຢູ່ແລ້ວວ່າມືທັງສອງຂອງເຮົານີ້ແຫລະ, ໄດ້ຮັບໃຊ້ຈັດຫາສິ່ງທີ່ເຮົາຕ້ອງການ
ກັບພວກທີ່ຢູ່ນຳເຮົານັ້ນ. [35]ໃນການທຸກສິ່ງທຸກຢ່າງເຮົາໄດ້ສະແດງໃຫ້ພວກທ່ານເຫັນວ່າຄວນທີ່
ຈະຊ່ອຍຄົນທີ່ມີແຮງນ້ອຍ ດ້ວຍເຮັດການໜັກໜ່ວງດັ່ງນີ້ ໂດຍລະນຶກເຖິງພຣະທຳຂອງພຣະ-
ເຢຊູເຈົ້າ ທີ່ຊົງກ່າວແລ້ວວ່າ 'ການໃຫ້ເປັນເຫດໃຫ້ມີຄວາມສຸກຫລາຍກວ່າການຮັບ'."
[36]ເມື່ອໂປໂລກ່າວດັ່ງນັ້ນແລ້ວທ່ານກໍຄຸເຂົ່າລົງໄຫວ້ວອນກັບຄົນເຫລົ່ານັ້ນ. [37]ເຂົາທຸກຄົນຈຶ່ງ
ຮ້ອງໄຫ້ຫລາຍ ແລະພາກັນກອດຄໍທ່ານຈູບຊົມຢ່າງຮັກແພງ. [38]ເຂົາມີຄວາມທຸກໃຈຫລາຍຍ້ອນ
ຄຳນີ້ຫລາຍກວ່າຂໍ້ອື່ນໆ ຄືຄຳທີ່ທ່ານກ່າວວ່າເຂົາຈະບໍ່ເຫັນໜ້າທ່ານອີກ ແລ້ວເຂົາໄດ້ພາກັນໄປ
ສົ່ງທ່ານເຖິງເຮືອ.

# ບົດທີ 21

## ໂປໂລເດີນທາງເມືອກຸງເຢຣູຊາເລັມ

[1]ເມື່ອເຮົາໄດ້ລາພັດພາກຈາກເຂົາໄປແລ້ວ ກໍໄດ້ລົງເຮືອສະເພົາໄປເຖິງເກາະໂກດຕາມທາງ
ກົງ ອີກວັນໜຶ່ງກໍມາເຖິງເກາະໂຣໂດ ເມື່ອອອກຈາກທີ່ນັ້ນກໍມາເຖິງເມືອງປາຕາຣາ. [2]ເມື່ອໄດ້
ພົບເຮືອລຳໜຶ່ງທີ່ຈະຂ້າມໄປແຂວງຟອຍນີເກ ພວກເຮົາຈຶ່ງລົງເຮືອລຳນັ້ນຕໍ່ໄປ. [3]ເມື່ອຫລຽວ
ເຫັນເກາະກຸບໂຣແລ້ວ ພວກເຮົາເວັ້ນເກາະນັ້ນຂ້າງຊ້າຍ ແລ້ວໄປເຖິງແຂວງຊີເຣຍແລະຈອດ
ເຮືອທີ່ທ່າເມືອງຕີເຣເພາະຈະເອົາຂອງບັນທຸກຂຶ້ນທີ່ນັ້ນ. [4]ເມື່ອໄດ້ພົບພວກສິດແລ້ວ ພວກເຮົາ
ໄດ້ພັກຢູ່ທີ່ນັ້ນເຈັດວັນ ສິດເຫລົ່ານັ້ນໄດ້ບອກໂປໂລໂດຍພຣະວິນຍານບໍ່ໃຫ້ທ່ານຂຶ້ນເມືອຍັງກຸງ
ເຢຣູຊາເລັມ. [5]ແຕ່ເມື່ອຄົບເຈັດວັນແລ້ວ ພວກເຮົາໄດ້ອອກເດີນທາງຕໍ່ໄປພວກສິດທັງໝົດພ້ອມ
ທັງເມຍແລະລູກໄດ້ໄປສົ່ງພວກເຮົານອກເມືອງ ແລ້ວເຮົາທັງຫລາຍໄດ້ພາກັນຄຸເຂົ່າລົງໄຫວ້
ວອນຢູ່ທີ່ຫາດຊາຍ. [6]ແລະຄຳນັບລາເຊິ່ງກັນແລະກັນ ພວກເຮົາກໍລົງເຮືອ ສ່ວນເຂົາກໍພາກັນ
ກັບບ້ານ. [7]ເມື່ອສຸດການເດີນທາງຈາກເມືອງຕີເຣ ກໍມາເຖິງເມືອງປະໂຕເລມາຍ[ກ] ພວກເຮົາ
ໄດ້ຄຳນັບພວກພີ່ນ້ອງແລະພັກຢູ່ກັບເຂົາວັນໜຶ່ງ. [8]ຕົກມື້ໜ້າມາພວກເຮົາໄດ້ອອກໄປຈຶ່ງມາເຖິງ
ເມືອງກາຍຊາເຣຍ ແລະເຂົ້າໄປໃນເຮືອນຂອງຟີລິບຜູ້ປະກາດຂ່າວປະເສີດ ຊຶ່ງເປັນຜູ້ໜຶ່ງໃນ
ຈຳພວກເຈັດຄົນນັ້ນ ພວກເຮົາກໍພັກຢູ່ກັບທ່ານ. [9]ອັນໜຶ່ງ ທ່ານຜູ້ນີ້ມີລູກສາວສີ່ຄົນ ຊຶ່ງເປັນຜູ້
ປະກາດພຣະທຳແລະຍັງເປັນສາວປອດຢູ່.
[10]ເມື່ອພວກເຮົາໄດ້ພັກຢູ່ຫັ້ນຫລາຍວັນແລ້ວ ມີໝໍທຳນວາຍຜູ້ໜຶ່ງລົງມາຈາກແຂວງຢູດາຍຊື່
ອາຄະໂບ. [11]ເມື່ອມາເຖິງພວກເຮົາແລ້ວ ອາຄະໂບໄດ້ເອົາສາຍຮັດແອວຂອງໂປໂລມັດຕີນມັດມື
ຂອງຕົນ ແລ້ວກ່າວວ່າ, "ພຣະວິນຍານບໍລິສຸດຊົງກ່າວດັ່ງນີ້ວ່າ 'ຢ່າງດຽວກັນນີ້ແຫລະ, ພວກ
ຢິວທີ່ກຸງເຢຣູຊາເລັມຈະມັດຜູ້ເປັນເຈົ້າຂອງສາຍຮັດແອວນີ້ໄວ້ ແລ້ວຈະມອບທ່ານໄວ້ໃນມືຂອງ
ຄົນຕ່າງຊາດ'." [12]ເມື່ອໄດ້ຍິນດັ່ງນີ້ແລ້ວ ຝ່າຍພວກເຮົາກັບຄົນທັງຫລາຍທີ່ຢູ່ຫັ້ນ ໄດ້ອ້ອນວອນ
ໂປໂລບໍ່ໃຫ້ຂຶ້ນເມືອຍັງກຸງເຢຣູຊາເລັມ. [13]ຝ່າຍໂປໂລຕອບວ່າ, "ເຫດສັນໃດທ່ານທັງຫລາຍຈຶ່ງ

---

[ກ]ຫລື "ເມື່ອພວກເຮົາເດີນທາງເຮືອຈາກເມືອງຕີເຣມາເຖິງເມືອງປະໂຕເລມາຍແລ້ວກໍສຸດທາງທະເລ."

ຮ້ອງໄຫ້ແລະເຮັດໃຫ້ເຮົາຊໍ້າໃຈ ດ້ວຍເຮົາເຕັມໃຈພ້ອມແລ້ວ ບໍ່ໄຊ່ທີ່ຈະໃຫ້ເຂົາຜູກມັດເຮົາໄວ້
ເທົ່ານັ້ນ ແຕ່ເຮົາພ້ອມແລ້ວທີ່ຈະຕາຍຢູ່ກຸງເຢຣູຊາເລັມ ເພາະເຫັນແກ່ພຣະນາມຂອງພຣະ-
ເຢຊູເຈົ້າ.” 14ເມື່ອທ່ານບໍ່ຍອມຟັງຕາມຄຳຊັກຊວນພວກເຮົາກໍບໍ່ຊັກຊວນອີກ ມີແຕ່ກ່າວວ່າ, “ຂໍ
ໃຫ້ເປັນໄປຕາມພຣະໄທຂອງອົງພຣະຜູ້ເປັນເຈົ້າເທີ້ນ.”

15ຫລັງຈາກນັ້ນພວກເຮົາໄດ້ຈັດແຈງເອົາສິ່ງຂອງ ແລ້ວຂຶ້ນເມືອຍັງກຸງເຢຣູຊາເລັມ. 16ມີລູກ-
ສິດລາງຄົນທີ່ມາຈາກເມືອງກາຍຊາເຣຍໄດ້ໄປນຳພວກເຮົາ ເຂົາໄດ້ພາພວກເຮົາໄປຫາຜູ້ໜຶ່ງຊື່
ມະນາໂຊນໄທເກາະກຸບໂຣເປັນລູກສິດເກົ່າແກ່ ຊຶ່ງເຮົາຈະພັກອາໃສຢູ່ກັບຜູ້ນັ້ນ.

## ໂປໂລຢ້ຽມຢາມຢາໂກໂບ

17ເມື່ອພວກເຮົາມາເຖິງກຸງເຢຣູຊາເລັມແລ້ວ ພວກພີ່ນ້ອງກໍຕ້ອນຮັບດ້ວຍຄວາມຍິນດີ. 18ຕົກ
ມື້ໜ້າມາ ໂປໂລກັບເຮົາທັງຫລາຍໄດ້ເຂົ້າໄປຫາຢາໂກໂບ ແລະພວກເຖົ້າແກ່ທັງປວງກໍຢູ່ພ້ອມ
ກັນທີ່ນັ້ນ. 19ເມື່ອໂປໂລໄດ້ຄຳນັບທ່ານເຫລົ່ານັ້ນແລ້ວ ຈຶ່ງໄດ້ກ່າວເຖິງເຫດການທັງປວງຕາມ
ລຳດັບ ຊຶ່ງພຣະເຈົ້າຊົງໂຜດກະທຳໃນໝູ່ຄົນຕ່າງຊາດໂດຍການປະຕິບັດຂອງຕົນ. 20ເມື່ອໄດ້
ຍິນດັ່ງນັ້ນແລ້ວເຂົາໄດ້ສັນລະເສີນພຣະເຈົ້າແລ້ວເວົ້າຕໍ່ ໂປໂລວ່າ, “ອ້າຍເອີຍ, ເຈົ້າເຫັນວ່າມີ
ພວກຢິວເປັນຈຳນວນຫລາຍໝື່ນໄດ້ວາງໃຈເຊື່ອ ເຂົາທັງປວງມີໃຈຮ້ອນຮົນຝ່າຍການຖືພຣະ-
ບັນຍັດ. 21ເຂົາໄດ້ຍິນຂ່າວເຖິງເຈົ້າວ່າ ເຈົ້າເຄີຍສັ່ງສອນພວກຢິວທັງປວງທີ່ຢູ່ໃນໝູ່ຊົນຕ່າງ
ຊາດ ໃຫ້ຖິ້ມໂມເຊເສຍ ແລ້ວກ່າວວ່າບໍ່ໃຫ້ລູກຂອງເຂົາຮັບພິທີຕັດ ຫລືທ່ຽວໄປຕາມຮີດຄອງ
ເກົ່າ. 22ເລື່ອງນີ້ເປັນຢ່າງໃດ ຄົນທັງປວງຄົງຊາບວ່າເຈົ້າໄດ້ມາແລ້ວ. 23ເຫດສັນນັ້ນຈົ່ງເຮັດ
ຢ່າງນີ້ ຕາມທີ່ເຮົາຈະບອກເຈົ້າ ຄືວ່າເຮົາມີຊາຍສີ່ຄົນທີ່ໄປບະບົນຕົວໄວ້. 24ເຈົ້າຈົ່ງພາຄົນເຫລົ່າ
ນີ້ໄປຊຳລະຕົວດ້ວຍກັນກັບເຂົາ ແລະເສຍເງິນແທນເຂົາ ເພື່ອເຂົາຈະໄດ້ແຖຫົວ ແລ້ວຄົນທັງ-
ຫລາຍຈຶ່ງຈະໄດ້ຮູ້ວ່າ ຄວາມທີ່ເຂົາໄດ້ຍິນເຖິງເຈົ້ານັ້ນບໍ່ເປັນຄວາມຈິງຈັກຂໍ້ ແຕ່ເຈົ້າເອງເປັນຜູ້
ຍຶດຖືແລະປະຕິບັດຕາມພຣະບັນຍັດຢູ່. 25ແຕ່ສ່ວນຄົນຕ່າງຊາດທີ່ເຊື່ອແລ້ວນັ້ນ ຝ່າຍພວກເຮົາ
ໄດ້ແຈ້ງຄວາມໃຫ້ເຂົາຊາບວ່າ ເຮົາໄດ້ລົງຄວາມເຫັນໃຫ້ເຂົາເວັ້ນເສຍຈາກການກິນຂອງຖວາຍ
ແກ່ພະທຽມ, ຈາກການກິນເລືອດ, ຈາກການກິນສັດຕາຍຮັດຄໍ, ແລະຈາກການຜິດຊາຍຍິງ.
26ໂປໂລຈຶ່ງພາສີ່ຄົນນັ້ນໄປ ແລະໃນວັນໜ້ານັ້ນໄດ້ຊຳລະຕົວດ້ວຍກັນກັບເຂົາ ແລ້ວຈຶ່ງເຂົ້າໄປ
ໃນບໍລິເວນພຣະວິຫານ ປະກາດວັນທີ່ການຊຳລະນັ້ນຈະສຳເລັດ ຄືວັນທີ່ຈະນຳເຄື່ອງບູຊາມາ
ຖວາຍເພື່ອຄົນເຫລົ່ານັ້ນທຸກຄົນ.

## ໂປໂລຖືກຈັບໃນບໍລິເວນພຣະວິຫານ

27ຄັນເກືອບຈະສິ້ນສຸດເຈັດວັນນັ້ນແລ້ວ ພວກຢິວທີ່ມາຈາກແຂວງອາເຊຍ ເມື່ອເຫັນໂປໂລ
ໃນບໍລິເວນພຣະວິຫານ ຈຶ່ງຍົວະຍົງປະຊາຊົນແລ້ວລົງມືຈັບໂປໂລ. 28ໂດຍຮ້ອງຂຶ້ນວ່າ, “ຊາວ
ອິສຣາເອນເອີຍ, ຈົ່ງມາຊ່ອຍກັນ ຄົນນີ້ແຫລະ, ເປັນຜູ້ທີ່ສັ່ງສອນຄົນທັງປວງທຸກທີ່ທຸກບ່ອນໃຫ້
ເປັນສັດຕູຕໍ່ຊົນຊາດຂອງເຮົາ, ຕໍ່ພຣະບັນຍັດແລະຕໍ່ສະຖານທີ່ນີ້ ແລະຫລາຍກວ່ານັ້ນອີກ ເຖິງ
ແມ່ນເປັນຄົນກຣີກກໍຕາມ ມັນກໍຍັງພາເຂົາເຂົ້າມາໃນບໍລິເວນພຣະວິຫານ ຈຶ່ງເຮັດໃຫ້ສະຖານທີ່
ອັນສັກສິດນີ້ຊົ່ວມົວໝອງໄປ.” 29ເພາະແຕ່ກ່ອນຄົນເຫລົ່ານັ້ນໄດ້ເຫັນໂທຟີໂມໄທເອເຟໂຊ ຢູ່

ກັບ ໂປໂລ ໃນ ເມືອງ ເຂົາຈຶ່ງນຶກວ່າ ໂປໂລ ໄດ້ພາຄົນນັ້ນເຂົ້າໄປໃນບໍລິເວນພຣະວິຫານ. [30]ແລ້ວ
ຄົນທັງເມືອງກໍຮືກັນຂຶ້ນ ພົນລະເມືອງກໍແລ່ນເຂົ້າໄປຮວມກັນ ແລະຈັບ ໂປໂລ ລາກອອກຈາກບໍ-
ລິເວນພຣະວິຫານ ແລ້ວກໍອັດປະຕູເສຍທັນທີ. [31]ຂະນະທີ່ເຂົາພະຍາຍາມຈະຂ້າ ໂປໂລ ຢູ່ ຂ່າວ
ນັ້ນໄດ້ລືໄປຍັງຜູ້ບັງຄັບກອງພັນ ວ່າກຸງ ເຢຣູຊາເລັມ ທັງໝົດເກີດການວຸ້ນວາຍຂຶ້ນ. [32]ໃນທັນໃດ
ນັ້ນນາຍພັນຈຶ່ງນຳເອົາພົນທະຫານກັບນາຍຮ້ອຍແລ່ນລົງໄປຍັງຝູງຄົນ ສ່ວນຄົນເຫລົ່ານັ້ນເມື່ອ
ໄດ້ເຫັນນາຍພັນແລະພວກທະຫານມາຈຶ່ງຢຸດຕີ ໂປໂລ. [33]ນາຍພັນຈຶ່ງເຂົ້າໄປໃກ້ແລະຈັບ ໂປໂລ
ໂດຍສັ່ງເອົາໂສ້ສອງເສັ້ນມາຜູກມັດທ່ານໄວ້ ແລ້ວຖາມວ່າ, "ທ່ານແມ່ນໃຜ ແລະໄດ້ເຮັດຫຍັງ
ແດ່." [34]ໃນໝູ່ຄົນເຫລົ່ານັ້ນຕ່າງຄົນຕ່າງຮ້ອງຂຶ້ນ ເມື່ອນາຍພັນເອົາຄວາມແນ່ນອນອັນໃດບໍ່ໄດ້
ເພາະວຸ້ນວາຍ ຈຶ່ງສັ່ງໃຫ້ພາໂປໂລເຂົ້າໄປໃນຄ້າຍທະຫານ. [35]ຄັນມາເຖິງຂັ້ນໄດແລ້ວພວກທະ-
ຫານໄດ້ຍົກໂປໂລຂຶ້ນ ເພາະປະຊາຊົນສະແດງຄວາມຮຸນແຮງ. [36]ເພາະຝູງຄົນເຫລົ່ານັ້ນຕາມ
ໄປຮ້ອງວ່າ, "ຈົ່ງເອົາມັນໄປຂ້າເສຍ." [37]ເມື່ອພວກທະຫານຈວນຈະນຳ ໂປໂລ ເຂົ້າໄປໃນຄ້າຍ
ໂປໂລ ຈຶ່ງກ່າວແກ່ນາຍພັນວ່າ, "ຂ້າພະເຈົ້າຂໍເວົ້າກັບທ່ານຈັກນ້ອຍໄດ້ບໍ" ນາຍພັນຈຶ່ງຕອບວ່າ,
"ເຈົ້າຮູ້ຈັກພາສາ ກຣີກ ບໍ່. [38]ເຈົ້າເປັນຄົນ ເອຢິບ ທີ່ກໍ່ການກະບົດໃນຄາວກ່ອນນັ້ນ ແລະໄດ້ນຳ-
ພາພວກກໍ່ການຮ້າຍສີ່ພັນຄົນເຂົ້າໄປໃນປ່າ ບໍ່ແມ່ນຫລື." [39]ແຕ່ ໂປໂລ ຕອບວ່າ, "ຂ້າພະເຈົ້ານີ້
ເປັນຄົນ ຢິວ ໄທເມືອງ ຕາໂຊ ແຂວງ ກີລີເກຍ ບໍ່ໃຊ່ເປັນພົນລະເມືອງຂອງເມືອງບໍ່ສຳຄັນ ຂໍ
ທ່ານໄດ້ອະນຸຍາດໃຫ້ຂ້າພະເຈົ້າເວົ້ານຳປະຊາຊົນແດ່ທ້ອນ." [40]ຄັນນາຍພັນອະນຸຍາດແລ້ວ ໂປ-
ໂລ ກໍຢືນຂຶ້ນທີ່ຂັ້ນໄດ ກວັກມືໃສ່ຄົນທັງປວງ ເມື່ອເຂົາມິດງຽບລົງແລ້ວ ທ່ານຈຶ່ງກ່າວຄຳປາໄສ
ເປັນພາສາ ເຮັບເຣີ ວ່າ,

# ບົດທີ 22

[1]"ພີ່ນ້ອງ ແລະທ່ານຜູ້ອາວຸໂສທັງຫລາຍເອີຍ, ຂໍຟັງຄຳໃຫ້ການທີ່ຂ້າພະເຈົ້າຈະ ແກ້ຕົວຕໍ່ໜ້າ
ທ່ານທັງຫລາຍໃນບັດນີ້." [2]ເມື່ອເຂົາໄດ້ຍິນທ່ານກ່າວເປັນພາສາ ເຮັບເຣີ ເຂົາກໍມິດງຽບລົງກວ່າ
ເກົ່າ ໂປໂລຈຶ່ງກ່າວວ່າ. [3]"ຂ້າພະເຈົ້ານີ້ເປັນຄົນຢິວ ເກີດໃນເມືອງ ຕາໂຊ ແຂວງ ກີລີເກຍ ໄດ້
ໃຫຍ່ຂຶ້ນໃນເມືອງນີ້ ແລະໄດ້ສຶກສາຮ່ຳຮຽນນຳອາຈານ ຄາມາລີເອັນ ຕາມພຣະບັນຍັດແຫ່ງບັນ-
ພະບຸລຸດຂອງພວກເຮົາຢ່າງເຄັ່ງຄັດ ດ້ວຍມີໃຈຮ້ອນຮົນໃນການປະຕິບັດ ພຣະເຈົ້າ ເໝືອນຢ່າງ
ທ່ານທັງຫລາຍທຸກວັນນີ້. [4]ຂ້າພະເຈົ້າໄດ້ຂົ່ມເຫງຄົນທັງຫລາຍທີ່ຖືໃນທາງນີ້ໃຫ້ເຂົາເຖິງຄວາມ
ຕາຍ ແລະໄດ້ຜູກມັດເອົາຊາຍແລະຍິງຂັງໄວ້ໃນຄຸກ. [5]ເລື່ອງນີ້ມະຫາປະໂລຫິດກັບພວກເຖົ້າແກ່
ສະມາຊິກສະພາ ຄົງເປັນພະຍານຝ່າຍຂ້າພະເຈົ້າແລ້ວ ເພາະຂ້າພະເຈົ້າໄດ້ຖືໜັງສືຈາກທ່ານ
ເຫລົ່ານັ້ນເອງໄປຍັງພວກພີ່ນ້ອງ ແລະຂ້າພະເຈົ້າຈຶ່ງເດີນທາງໄປຍັງ ເມືອງ ດາມາເຊ ເພື່ອມັດ
ຄົນທີ່ຢູ່ຫັ້ນນຳມາຍັງກຸງ ເຢຣູຊາເລັມ ໃຫ້ລົງໂທດເຂົາເສຍ.

## ໂປໂລເລົ່າເລື່ອງການກັບໃຈຂອງຕົນ

*(ກຈກ 9:1-19; 26:16-28)*

[6]"ເມື່ອຂ້າພະເຈົ້າກຳລັງເດີນທາງໄປໃກ້ຈະເຖິງ ເມືອງ ດາມາເຊ ປະມານເວລາທ່ຽງ ໃນທັນ-

ໃດນັ້ນມີແສງສະຫວ່າງກ້າສ່ອງມາບລົງມາຈາກຟ້າລ້ອມຂ້າພະເຈົ້າໄວ້. 7ຂ້າພະເຈົ້າໄດ້ລົ້ມລົງ
ເຖິງດິນ ແລະໄດ້ຍິນພຣະສຸລະສຽງຖາມຂ້າພະເຈົ້າວ່າ 'ໂຊໂລ ໂຊໂລເອີຍ, ເຈົ້າຂົ່ມເຫງເຮົາ
ເຮັດຫຍັງ.' 8ຝ່າຍຂ້າພະເຈົ້າກໍທູນຕອບວ່າ 'ທ່ານແມ່ນຜູ້ໃດ' ແລ້ວພຣະອົງຊົງກ່າວກັບຂ້າພະ-
ເຈົ້າວ່າ, 'ເຮົານີ້ຄື ເຢຊູ ໄທ ນາຊາເຣັດທີ່ເຈົ້າຂົ່ມເຫງນັ້ນ.' 9ສ່ວນຄົນທັງຫລາຍທີ່ຢູ່ກັບຂ້າພະເຈົ້າ
ໄດ້ເຫັນແສງສະຫວ່າງນັ້ນ ແຕ່ພຣະສຸລະສຽງທີ່ຊົງກ່າວກັບຂ້າພະເຈົ້າເຂົາບໍ່ໄດ້ຍິນຄັກ. 10ຂ້າ-
ພະເຈົ້າຈຶ່ງທູນຖາມວ່າ 'ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຂ້າພຣະອົງຈະຕ້ອງເຮັດແນວໃດ' ພຣະອົງ
ຊົງບອກຂ້າພະເຈົ້າວ່າ 'ຈົ່ງລຸກຂຶ້ນເຂົ້າໄປໃນເມືອງດາມາເຊ ທີ່ນັ້ນເຂົາຈະບອກເຈົ້າໃຫ້ຮູ້ເຖິງ
ເລື່ອງການທຸກສິ່ງທີ່ໄດ້ກຳນົດໄວ້ໃຫ້ເຈົ້າເຮັດນັ້ນ.' 11ເມື່ອຂ້າພະເຈົ້າເຫັນສິ່ງໃດບໍ່ໄດ້ ເນື່ອງຈາກ
ແສງສະຫວ່າງອັນກ້ານັ້ນ ຄົນທີ່ມາກັບຂ້າພະເຈົ້າໄດ້ຈູງມືຂ້າພະເຈົ້າ ພາເຂົ້າໃນເມືອງດາມາເຊ.
12"ມີຊາຍຜູ້ໜຶ່ງຊື່ ອານາເນຍ, ເປັນຄົນຢຳເກງພຣະເຈົ້າຕາມພຣະບັນຍັດ ແລະມີຊື່ສຽງດີໃນ
ຖ້າມກາງພວກຢິວທີ່ອາໃສຢູ່ໃນທີ່ນັ້ນ. 13ທ່ານໄດ້ມາຫາແລະຢືນຢູ່ໃກ້ຂ້າພະເຈົ້າກ່າວວ່າ 'ໂຊ-
ໂລ ນ້ອງຂອງເຮົາເອີຍ, ຈົ່ງເຫັນຮຸ່ງອີກເສຍ' ໃນທັນໃດນັ້ນຂ້າພະເຈົ້າໄດ້ເງີຍໜ້າຂຶ້ນ ຈຶ່ງໄດ້
ເຫັນທ່ານ. 14ແລ້ວທ່ານໄດ້ກ່າວວ່າ 'ພຣະເຈົ້າແຫ່ງບັນພະບຸລຸດຂອງພວກເຮົາໄດ້ຊົງເລືອກເຈົ້າ
ໄວ້ ໃຫ້ຮູ້ຈັກນ້ຳພຣະໄທຂອງພຣະອົງ, ໃຫ້ເຫັນພຣະອົງຜູ້ຊອບທຳນັ້ນ, ແລະໃຫ້ໄດ້ຍິນພຣະສຸ-
ລະສຽງຈາກພຣະໂອດຂອງພຣະອົງ. 15ດ້ວຍວ່າເຈົ້າຈະເປັນພະຍານຝ່າຍພຣະອົງ ໃຫ້ຄົນທັງ-
ຫລາຍຮູ້ເຖິງເລື່ອງເຫດການຊຶ່ງເຈົ້າໄດ້ເຫັນແລະໄດ້ຍິນນັ້ນ. 16ບັດນີ້ເຈົ້າຍັງລໍຊ້າຢູ່ເຮັດຫຍັງ ຈົ່ງ
ລຸກຂຶ້ນຮັບບັບຕິສະມາ ແລະຊຳລະລ້າງຄວາມຜິດບາບຂອງເຈົ້າເສຍດ້ວຍຮ້ອງອອກພຣະນາມ
ຂອງພຣະອົງ.'

## ພຣະເຈົ້າຊົງເອີ້ນໂປໂລໃຫ້ໄປຫາຄົນຕ່າງຊາດ

17"ເມື່ອຂ້າພະເຈົ້າກັບມາຍັງກຸງເຢຣູຊາເລັມ ແລະກຳລັງໄຫວ້ວອນຢູ່ໃນບໍລິເວນພຣະວິຫານ
ກໍລືມຕົງໄປ. 18ຂ້າພຣະອົງໄດ້ເຫັນພຣະອົງຜູ້ຊົງກ່າວກັບຂ້າພະເຈົ້າວ່າ 'ຈົ່ງຮີບອອກໄປຈາກກຸງ
ເຢຣູຊາເລັມໄວໆ ດ້ວຍວ່າເຂົາບໍ່ຮັບຄຳຂອງເຈົ້າຊຶ່ງອ້າງພະຍານເຖິງເຮົາ.' 19ຂ້າພະເຈົ້າໄດ້ທູນ
ວ່າ 'ຂ້າແດ່ພຣະຜູ້ເປັນເຈົ້າ, ຄົນເຫລົ່ານັ້ນໄດ້ຊາບຢູ່ວ່າ ຂ້າພຣະອົງນີ້ເປັນຜູ້ທີ່ຈັບຄົນທັງຫລາຍ
ທີ່ເຊື່ອໃນພຣະອົງໃສ່ຄຸກ ແລະຂ້ຽນຕີຕາມໂຮງທຳທົ່ວໄປ. 20ແລະເມື່ອເຂົາໄດ້ເຮັດໃຫ້ເລືອດ
ຂອງຊະເຕຟາໂນຜູ້ເປັນພະຍານຝ່າຍພຣະອົງໄຫລອອກນັ້ນ ຂ້າພຣະອົງນີ້ເອງກໍຢືນຢູ່ໃກ້ແລະ
ເຫັນດີໃນການນັ້ນ ຂ້າພຣະອົງເປັນຜູ້ເຝົ້າເສື້ອຜ້າຂອງຄົນທີ່ຂ້າຊະເຕຟາໂນນັ້ນ.' 21ແລ້ວພຣະ-
ອົງໄດ້ຊົງກ່າວກັບຂ້າພະເຈົ້າວ່າ 'ຈົ່ງໄປເສຍ ເພາະຝ່າຍເຮົາຈະໃຊ້ໃຫ້ເຈົ້າໄປໄກໆ ໄປຫາຄົນ
ຕ່າງຊາດ'."

## ນາຍພັນຄຸມຕົວໂປໂລໄວ້

22ຄົນທັງຫລາຍໄດ້ຟັງໂປໂລກ່າວຈົນເຖິງຄຳນີ້ ແລ້ວກໍຮ້ອງສຽງດັງຂຶ້ນວ່າ, "ຄົນຢ່າງນີ້ຢູ່ໜັກ
ແຜ່ນດິນ ເອົາມັນໄປເສຍ ບໍ່ຄວນຈະໃຫ້ມັນມີຊີວິດຢູ່." 23ເມື່ອເຂົາກຳລັງໂຫ່ຮ້ອງທັງແກ້ເສື້ອ
ໂຍນໄປມາ ແລະກຳຂີ້ຝຸ່ນຊັດຂຶ້ນໃນອາກາດ. 24ນາຍພັນຈຶ່ງສັ່ງໃຫ້ພາໂປໂລເຂົ້າໄປໃນຄ້າຍ
ທະຫານ ແລະສັ່ງໃຫ້ໄຕ່ສວນດ້ວຍການຂ້ຽນເພື່ອຈະໄດ້ຮູ້ວ່າເປັນຫຍັງເຂົາຈຶ່ງຮ້ອງຂຶ້ນໃສ່ໂປໂລ

ຢ່າງນີ້. 25ເມື່ອເຂົາເອົາເຊືອກໜັງມັດຄິງ ໂປໂລ ໄວ້ ທ່ານຈຶ່ງຖາມນາຍຮ້ອຍທີ່ຢືນຢູ່ຫັ້ນວ່າ,
"ການທີ່ຈະຂ້ຽນຄົນສັນຊາດ ໂຣມ ກ່ອນພິພາກສາລົງໂທດນັ້ນ ຖືກຕ້ອງຕາມກົດໝາຍຫລື."
26ເມື່ອນາຍຮ້ອຍໄດ້ຍິນແລ້ວຈຶ່ງໄປແຈ້ງຄວາມໃຫ້ນາຍພັນວ່າ, "ທ່ານກຳລັງຈະເຮັດອັນໃດເພາະ
ຜູ້ນັ້ນເປັນຄົນສັນຊາດ ໂຣມ." 27ຝ່າຍນາຍພັນຈຶ່ງໄປຫາ ໂປໂລ ຖາມວ່າ, "ເຈົ້າເປັນຄົນສັນຊາດ
ໂຣມ ຫລື ຈົ່ງບອກເຮົາແມ" ສ່ວນ ໂປໂລ ກໍຕອບວ່າ, "ແມ່ນແລ້ວ." 28ນາຍພັນເລີຍເວົ້າວ່າ,
"ຝ່າຍເຮົາ, ກ່ອນຈະໄດ້ເປັນສັນຊາດ ໂຣມ ນັ້ນ ເຮົາຕ້ອງເສຍເງິນຫລາຍ" ໂປໂລ ຈຶ່ງຕອບວ່າ,
"ແຕ່ຝ່າຍເຮົານີ້ກໍເປັນສັນຊາດ ໂຣມ ໂດຍກຳເນີດ." 29ເຫດສັນນັ້ນພວກຄົນທີ່ກຳລັງຈະໄຕ່ສວນ
ໂປໂລ ຈຶ່ງຖອຍອອກໄປຈາກທ່ານທັນທີ ແລະນາຍພັນ, ເມື່ອຮູ້ວ່າ ໂປໂລ ເປັນຄົນສັນຊາດ ໂຣມ,
ກໍຢ້ານແລະຕົກໃຈເໝືອນກັນ ເພາະຕົນໄດ້ມັດທ່ານໄວ້.

## ໂປໂລຢູ່ຕໍ່ໜ້າສານສູງສຸດ

30ຕົກມື້ໜ້າມານາຍພັນຢາກຮູ້ວ່າພວກຢິວໄດ້ກ່າວຫາ ໂປໂລ ດ້ວຍເຫດໃດ ຈຶ່ງໄດ້ແກ້ໄສ້ອອກ
ຈາກ ໂປໂລ ເສຍ ແລະສັ່ງໃຫ້ພວກປະໂລຫິດຕົນໃຫຍ່ ກັບບັນດາສະມາຊິກສານສູງສຸດມາປະ-
ຊຸມກັນ ແລ້ວພາ ໂປໂລ ລົງໄປໃຫ້ຢືນຢູ່ໃນທີ່ປະຊຸມ.

# ບົດທີ 23

1ຝ່າຍ ໂປໂລ ຈຶ່ງຫລຽວເບິ່ງພວກຂາປະຊຸມແລ້ວກ່າວວ່າ, "ພີ່ນ້ອງທັງຫລາຍເອີຍ, ເຮົານີ້ໄດ້
ດຳເນີນຊີວິດຕໍ່ພຣະພັກ ພຣະເຈົ້າ ລ້ວນແຕ່ຕາມທີ່ໃຈສຳນຶກຜິດແລະຊອບວ່າດີຈົນເຖິງທຸກວັນ
ນີ້." 2ອານາເນຍຜູ້ເປັນມະຫາປະໂລຫິດ ຈຶ່ງສັ່ງພວກຄົນທີ່ຢືນຢູ່ໃກ້ນັ້ນໃຫ້ຕົບປາກ ໂປໂລ. 3ໂປ-
ໂລ ຈຶ່ງກ່າວແກ່ທ່ານວ່າ, "ພຣະເຈົ້າ ຊົງຕົບເຈົ້າ ຜູ້ເປັນຝາທີ່ທາດ້ວຍປູນຂາວ ເຈົ້ານັ່ງພິພາກສາ
ເຮົາຕາມພຣະບັນຍັດ ແລະຍັງສັ່ງໃຫ້ເຂົາຕົບເຮົາ ຊຶ່ງເປັນການລ່ວງພຣະບັນຍັດຫລື." 4ຄົນທັງ-
ຫລາຍທີ່ຢືນຢູ່ຫັ້ນຈຶ່ງຖາມ ໂປໂລ ວ່າ, "ເຈົ້າກ່າວໝິ່ນປະໝາດຕໍ່ມະຫາປະໂລຫິດຂອງ ພຣະເຈົ້າ
ຫລື." 5ໂປໂລ ຈຶ່ງຕອບວ່າ, "ພີ່ນ້ອງທັງຫລາຍເອີຍ, ເຮົາບໍ່ຮູ້ວ່າທ່ານເປັນມະຫາປະໂລຫິດ
ເພາະພຣະຄຳພີຂຽນໄວ້ວ່າ 'ຢ່າກ່າວຄຳຊົ່ວຮ້າຍຕໍ່ຜູ້ປົກຄອງພົນລະເມືອງ'."
6ຄັນ ໂປໂລ ສັງເກດເຫັນວ່າ ໃນທີ່ປະຊຸມນັ້ນສ່ວນໜຶ່ງເປັນພວກ ຊາດູກາຍ ແລະສ່ວນໜຶ່ງ
ເປັນພວກ ຟາຣີຊາຍ ທ່ານຈຶ່ງຮ້ອງຂຶ້ນຕໍ່ໜ້າທີ່ປະຊຸມວ່າ, "ພີ່ນ້ອງທັງຫລາຍເອີຍ, ເຮົານີ້ເປັນ
ຟາຣີຊາຍ ແລະເປັນລູກຂອງ ຟາຣີຊາຍ ທີ່ເຮົາຖືກພິຈາລະນາພິພາກສານີ້ກໍເພາະເລື່ອງຄວາມ
ຫວັງວ່າມີການຄືນມາຈາກຕາຍ." 7ເມື່ອ ໂປໂລ ກ່າວຢ່າງນັ້ນແລ້ວ ພວກ ຟາຣີຊາຍ ແລະພວກ
ພວກ ຊາດູກາຍ ກໍເກີດການຖຽງກັນຂຶ້ນແລະທີ່ປະຊຸມກໍແຕກເປັນສອງພວກ. 8ດ້ວຍວ່າພວກ ຊາ-
ດູກາຍ ເວົ້າວ່າການເປັນຄືນມາຈາກຕາຍບໍ່ມີ, ເທວະດາຫລືວິນຍານກໍບໍ່ມີ ແຕ່ພວກ ຟາຣີຊາຍ ຖື
ວ່າມີທັງສອງຢ່າງ. 9ແລ້ວເລີຍເກີດອຶກກະທຶກກັນຂຶ້ນຢ່າງໃຫຍ່ ແລະມີນັກທຳບາງຄົນຝ່າຍພວກ
ຟາຣີຊາຍ ໄດ້ຢືນຂຶ້ນຄັດຄ້ານວ່າ, "ເຮົາບໍ່ເຫັນຜິດອັນໃດໃນຄົນຜູ້ນີ້ ຖ້າວິນຍານຫລືເທວະດາໄດ້
ກ່າວແກ່ທ່ານເດ ຈະວ່າຢ່າງໃດ." 10ເມື່ອການໂຕ້ຖຽງກັນຮຸນແຮງຂຶ້ນນາຍພັນກໍຢ້ານວ່າເຂົາຈະ
ຍາດແຍງຈັບ ໂປໂລ ຈີກຂາດເສຍ ທ່ານຈຶ່ງສັ່ງໃຫ້ພວກທະຫານລົງໄປຍາດເອົາ ໂປໂລ ອອກຈາກ

ຖ້າມກາງພວກນັ້ນ ພາເຂົ້າໄປໄວ້ໃນຄ້າຍ.
[11]ໃນຄືນວັນນັ້ນອົງພຣະຜູ້ເປັນເຈົ້າຊົງຢືນຢູ່ໃກ້ໂປໂລ ຊົງກ່າວວ່າ, "ຈົ່ງມີໃຈກ້າເພາະວ່າເຈົ້າ
ໄດ້ເປັນພະຍານຝ່າຍເຮົາໃນກຸງເຢຣູຊາເລັມຢ່າງໃດ ເຈົ້າຈະຕ້ອງເປັນພະຍານໃນກຸງໂຣມຢ່າງ
ນັ້ນເໝືອນກັນ."

## ການຮ່ວມຄິດປອງຮ້າຍຕໍ່ຊີວິດໂປໂລ

[12]ຄັນເວລາຮຸ່ງເຊົ້າແລ້ວພວກຢິວໄດ້ສົມທົບກັນສາບານຕົວວ່າ ຈະບໍ່ກິນບໍ່ດື່ມຈົນກວ່າຈະໄດ້
ຂ້າໂປໂລເສຍ. [13]ຄົນທີ່ຮ່ວມກັນຄິດປອງຮ້າຍນັ້ນມີກວ່າສີ່ສິບຄົນ. [14]ເຂົາຈຶ່ງໄປຫາພວກປະໂລ-
ຫິດຕົນໃຫຍ່ກັບພວກເຖົ້າແກ່ກ່າວວ່າ, "ພວກເຮົາໄດ້ສາບານຕົວແຂງແຮງວ່າຈະບໍ່ຊີມອັນໃດ
ກວ່າຈະໄດ້ຂ້າໂປໂລເສຍ. [15]ເຫດສັນນັ້ນ, ບັດນີ້ພວກທ່ານພ້ອມດ້ວຍພວກຂາປະຊຸມ ຈົ່ງໄປ
ເວົ້າໃຫ້ນາຍພັນເຂົ້າໃຈວ່າ ພວກທ່ານຕ້ອງການໃຫ້ພາໂປໂລລົງມາຫາ ເໝືອນດັ່ງໝາຍໃຈຈະ
ໂຈດຖາມໃນເລື່ອງມັນຢ່າງຄັກແນ່ກວ່າເກົ່າ ຝ່າຍພວກເຮົາຈະຕຽມຕົວໄວ້ພ້ອມຈະຂ້າມັນເສຍ
ເມື່ອມັນຍັງມາບໍ່ທັນເຖິງ."
[16]ແຕ່ລູກຊາຍຂອງນ້ອງສາວໂປໂລໄດ້ຍິນເລື່ອງທີ່ເຂົາຄອຍປອງຮ້າຍນັ້ນ ຈຶ່ງເຂົ້າໄປໃນຄ້າຍ
ບອກໃຫ້ໂປໂລຮູ້. [17]ໂປໂລຈຶ່ງເອີ້ນນາຍຮ້ອຍຜູ້ໜຶ່ງມາບອກວ່າ, "ຈົ່ງພາຊາຍໜຸ່ມຜູ້ນີ້ໄປຫານາຍ
ພັນເພາະລາວມີເລື່ອງຈະແຈ້ງໃຫ້ເພິ່ນຟັງ." [18]ເຫດສັນນັ້ນນາຍຮ້ອຍຈຶ່ງຮັບຕົວຊາຍໜຸ່ມຜູ້ນັ້ນ
ແລ້ວພາໄປຫານາຍພັນ ແລະກ່າວແກ່ທ່ານວ່າ, "ໂປໂລຜູ້ຖືກຂັງຢູ່ນັ້ນໄດ້ເອີ້ນຂ້ານ້ອຍ ຂໍໃຫ້ພາ
ຊາຍໜຸ່ມຜູ້ນີ້ມາຫາທ່ານເພາະລາວມີເລື່ອງທີ່ຈະແຈ້ງໃຫ້ທ່ານຟັງ." [19]ນາຍພັນຈຶ່ງຈູງມືຊາຍຜູ້ນັ້ນ
ໄປຕ່າງຫາກແລ້ວຖາມເປັນການສ່ວນຕົວວ່າ, "ເຈົ້າມີເລື່ອງໃດຈະແຈ້ງໃຫ້ເຮົາຮູ້." [20]ຊາຍໜຸ່ມຜູ້
ນັ້ນຕອບວ່າ, "ພວກຢິວໄດ້ຕົກລົງກັນວ່າຈະຮ້ອງຂໍໃຫ້ນຳເອົາໂປໂລລົງໄປໃນທີ່ປະຊຸມມື້ອື່ນນີ້
ເໝືອນດັ່ງຈະໄຕ່ສວນໃນເລື່ອງເພິ່ນໃຫ້ຄັກແນ່ກວ່າເກົ່າ. [21]ເພາະສັນນັ້ນທ່ານຢ່າໄດ້ຟັງເຂົາ
ເພາະໃນພວກເຂົານັ້ນມີຊາຍສີ່ສິບກວ່າຄົນກຳລັງຄອຍປອງຮ້າຍຕໍ່ໂປໂລ ເຂົາໄດ້ສາບານຕົວວ່າ
ເຂົາຈະບໍ່ກິນບໍ່ດື່ມຈົນກວ່າຈະໄດ້ຂ້າເພິ່ນເສຍ ແລະດຽວນີ້ເຂົາພ້ອມແລ້ວກຳລັງຄອຍຮັບຄວາມ
ເຫັນຈາກທ່ານຢູ່." [22]ແລ້ວນາຍພັນໃຫ້ຊາຍໜຸ່ມນັ້ນໄປໂດຍສັ່ງວ່າ, "ຢ່າບອກໃຫ້ຜູ້ໃດຮູ້ວ່າເຈົ້າ
ໄດ້ມາແຈ້ງເລື່ອງນີ້ໃຫ້ແກ່ເຮົາ."

## ເຂົາສົ່ງໂປໂລໄປຫາເຟລິກຜູ້ປົກຄອງ

[23]ຝ່າຍນາຍພັນຈຶ່ງເອີ້ນນາຍຮ້ອຍສອງຄົນມາສັ່ງວ່າ, "ຈົ່ງຈັດພົນທະຫານສອງຮ້ອຍ, ກັບ
ທະຫານມ້າເຈັດສິບຄົນ, ແລະທະຫານຫອກສອງຮ້ອຍ ໃຫ້ພ້ອມໃນເວລາສາມເກົ້າໂມງຄືນນີ້
ເພື່ອຈະໄປຍັງເມືອງກາຍຊາເຣຍ. [24]ຈົ່ງຈັດຫາສັດໃຫ້ໂປໂລຂີ່ເພື່ອຈະສົ່ງດ້ວຍຄວາມປອດໄພ
ໄປຍັງເຟລິກຜູ້ປົກຄອງ." [25]ແລ້ວນາຍພັນຈຶ່ງຂຽນຈົດໝາຍໜຶ່ງສະບັບ ມີໃຈຄວາມດັ່ງຕໍ່ໄປນີ້,
[26] "ຂ້າພະເຈົ້າ, ກະໂລດິໂອລີເຊຍ ກາບຮຽນພະນະທ່ານເຟລິກຜູ້ປົກຄອງຊາບ.
[27]ພວກຢິວໄດ້ຈັບຊາຍຄົນນີ້ແລະເກືອບຈະຂ້າເພິ່ນເສຍ ແຕ່ຂ້າພະເຈົ້າພາພວກ
ທະຫານໄປຊ່ອຍໄວ້ໄດ້ ດ້ວຍຂ້າພະເຈົ້າໄດ້ຍິນວ່າຜູ້ນີ້ເປັນຄົນສັນຊາດໂຣມ.
[28]ຂ້າພະເຈົ້າຢາກຮູ້ຄັກແນ່ເຖິງເຫດທີ່ພວກຢິວຟ້ອງເພິ່ນ ຂ້າພະເຈົ້າຈຶ່ງພາເພິ່ນ

ໄປຍັງສານສູງສຸດຂອງເຂົາ. 29ຂ້າພະເຈົ້າເຫັນວ່າເພິ່ນຖືກຟ້ອງໃນເລື່ອງການ
ຖຽງກັນອັນກ່ຽວກັບບົດບັນຍັດຂອງພວກຢິວ ແຕ່ບໍ່ມີຂໍ້ຫາອັນໃດທີ່ເພິ່ນຄວນຈະ
ຕາຍຫລືຖືກຂັງໄວ້ກໍດີ. 30ເມື່ອຂ້າພະເຈົ້າຊາບວ່າມີການປອງຮ້າຍຕໍ່ຊາຍຄົນນີ້
ຂ້າພະເຈົ້າຈຶ່ງສົ່ງເພິ່ນມາຫາພະນະທ່ານທັນທີ ພ້ອມທັງໄດ້ສັ່ງຝ່າຍໂຈດໃຫ້ໄປ
ວ່າຄວາມກັບເພິ່ນຕໍ່ໜ້າພະນະທ່ານເໝືອນກັນ.”

31ດັ່ງນັ້ນໃນເວລາກາງຄືນພວກທະຫານໄດ້ຮັບເອົາໂປໂລ ພາໄປເຖິງເມືອງອັນຕິປາຕີຕາມ
ຄຳສັ່ງ. 32ມື້ໜ້າມາເຂົາໄດ້ປະໃຫ້ທະຫານມ້າໄປສົ່ງໂປໂລ ແລ້ວເຂົາກໍກັບໄປຍັງຄ້າຍ. 33ສ່ວນ
ພວກທະຫານມ້າ ເມື່ອໄປເຖິງເມືອງກາຍຊາເຣຍແລ້ວຈຶ່ງສົ່ງຈົດໝາຍໃຫ້ຜູ້ປົກຄອງແລະມອບ
ໂປໂລໄວ້ໃຫ້ທ່ານ. 34ເມື່ອຜູ້ປົກຄອງໄດ້ອ່ານຈົດໝາຍແລ້ວ ຈຶ່ງຖາມວ່າໂປໂລມາຈາກແຂວງໃດ
ຄັນຊາບວ່າມາຈາກແຂວງກີລີເກຍ. 35ທ່ານຈຶ່ງກ່າວວ່າ, “ເມື່ອໂຈດມາພ້ອມກັນແລ້ວເຮົາຈະຟັງ
ຄຳໃຫ້ການຂອງເຈົ້າ” ທ່ານຈຶ່ງສັ່ງໃຫ້ຄຸມຕົວໂປໂລໄວ້ໃນໄປຣໂຕຣຽນຂອງເຮໂຣດ.

# ບົດທີ 24

## ເຂົາຟ້ອງໂປໂລຕໍ່ໜ້າຜູ້ປົກຄອງ

1ຄັນລ່ວງໄປໄດ້ຫ້າວັນແລ້ວອານາເນຍມະຫາປະໂລຫິດໄດ້ລົງໄປ ກັບພວກເຖົ້າແກ່ລາງຄົນ
ແລະທະນາຍຄວາມຄົນໜຶ່ງຊື່ເຕຕູໂລ ພວກເລົ່ານີ້ໄດ້ສະເໜີຄະດີຂອງໂປໂລຕໍ່ໜ້າຜູ້ປົກຄອງ.
2ຄັນເອີ້ນໂປໂລເຂົ້າມາແລ້ວເຕຕູໂລຈຶ່ງຕັ້ງຕົ້ນຟ້ອງຂຶ້ນວ່າ, “ຮຽນພະນະທ່ານເຟລິກທີ່ນັບຖື
ຂ້າພະເຈົ້າທັງຫລາຍໄດ້ມີຄວາມສະຫງົບສຸກຫລາຍເພາະທ່ານ ແລະມີການປັບປຸງອັນມີປະ-
ໂຫຍດແກ່ປະຊາຊາດ ກໍເພາະຄວາມຫລິງເຫັນພາຍໜ້າຂອງທ່ານ. 3ພວກຂ້າພະເຈົ້າຮັບຄຸນ
ປະໂຫຍດທັງຫລາຍນີ້ຢູ່ທຸກປະການແລະທຸກບ່ອນ ດ້ວຍໃຈຂອບຄຸນທ່ານທຸກຢ່າງ. 4ແຕ່ເພື່ອບໍ່
ໃຫ້ທ່ານເສຍເວລາເກີນໄປ ຂ້າພະເຈົ້າຂໍຄວາມກະລຸນາຈາກທ່ານໂຜດຟັງຂ້າພະເຈົ້າຈັກໜ້ອຍ
ໜຶ່ງ. 5ດ້ວຍພວກຂ້າພະເຈົ້າເຫັນຄົນນີ້ເປັນໄພອັນຕະລາຍແກ່ບ້ານເມືອງ, ທີ່ຍົວະຍົງພວກຢິວ
ໃຫ້ເກີດການວຸ້ນວາຍທົ່ວພິພົບ, ແລະເປັນຕົວການຂອງພວກນາຊາເຣັດນັ້ນ. 6ອີກປະການໜຶ່ງຜູ້
ນີ້ໄດ້ພະຍາຍາມເຮັດໃຫ້ບໍລິເວນພຣະວິຫານຂາດຄວາມສັກສິດ ພວກຂ້າພະເຈົ້າຈຶ່ງຈັບລາວໄວ້
[ແລະວ່າຈະພິພາກສາລາວຕາມກົດໝາຍຂອງພວກຂ້າພະເຈົ້າ. 7ແຕ່ນາຍພັນລີເຊຍໄດ້ມາໃຊ້
ອຳນາດຍາດຕົວລາວຈາກມືຂອງພວກຂ້າພະເຈົ້າ, 8ແລະສັ່ງໃຫ້ໂຈດມາຟ້ອງລາວຕໍ່ໜ້າທ່ານ]
ຖ້າທ່ານເອງຈະໄຕ່ຖາມລາວ ທ່ານອາດຈະຊາບໄດ້ຄັກແນ່ຈາກລາວນັ້ນແຫລະ, ໃນເລື່ອງທີ່
ພວກຂ້າພະເຈົ້າຟ້ອງນັ້ນ.” 9ຝ່າຍພວກຢິວຈຶ່ງສະໜັບສະໜູນຄຳກ່າວຫານັ້ນ ແລະຢືນຢັນວ່າ
ເປັນຄວາມຈິງຢ່າງນັ້ນແທ້.

## ໂປໂລແກ້ຕົວຕໍ່ໜ້າເຟລິກ

10ເມື່ອຜູ້ປົກຄອງໄດ້ສັນຍານໃຫ້ໂປໂລເວົ້າ ທ່ານຈຶ່ງຮຽນວ່າ, “ເນື່ອງຈາກທີ່ຂ້າພະເຈົ້າໄດ້
ຊາບວ່າ ທ່ານເປັນຜູ້ພິພາກສາປະເທດນີ້ແຕ່ຫລາຍປີມາແລ້ວ ຂ້າພະເຈົ້າກໍຈະແກ້ຄະດີຂອງຂ້າ-
ພະເຈົ້າດ້ວຍຄວາມເບົາໃຈ. 11ທ່ານຄົງສືບຊາບໄດ້ວ່າ ຕັ້ງແຕ່ຂ້າພະເຈົ້າຂຶ້ນເມືອນະມັດສະການ

ໃນກຸງ ເຢຣູຊາເລັມ ນັ້ນ ຍັງບໍ່ເກີນສິບສອງວັນ. 12ເຂົາບໍ່ໄດ້ເຫັນຂ້າພະເຈົ້າຜິດຖຽງກັນກັບຜູ້ໜຶ່ງ
ຜູ້ໃດໃນບໍລິເວນພຣະວິຫານ, ຫລືຍົວະຍົງປະຊາຊົນໃຫ້ວຸ້ນວາຍ ບໍ່ວ່າໃນໂຮງທຳມະເທດສະໜາ
ຫລືໃນເມືອງ. 13ເຫດການທັງປວງທີ່ເຂົາກຳລັງຟ້ອງຂ້າພະເຈົ້າໃນບັດນີ້ ເຂົາພິສູດບໍ່ໄດ້. 14ແຕ່
ຂ້າພະເຈົ້າຂໍຮັບຕໍ່ໜ້າທ່ານຢ່າງໜຶ່ງ ຄືຕາມທາງນັ້ນທີ່ເຂົາຖືວ່າເປັນລັດທິນອກຮີດ ຂ້າພະເຈົ້າ
ປະຕິບັດ ພຣະເຈົ້າ ແຫ່ງບັນພະບຸລຸດຂອງພວກຂ້າພະເຈົ້າ ໂດຍໄດ້ເຊື່ອຖືບັນດາຖ້ອຍຄຳທັງປວງ
ທີ່ຂຽນໄວ້ໃນພຣະບັນຍັດ ແລະໃນພຣະຄຳພີຂອງຜູ້ປະກາດພຣະທຳນັ້ນ. 15ຂ້າພະເຈົ້າມີຄວາມ
ຫວັງໃຈໃນ ພຣະເຈົ້າ ຕາມຊຶ່ງເຂົາເອງກໍມີຄວາມຫວັງໃຈເໝືອນກັນ ຄືຫວັງໃຈວ່າຄົນທັງປວງທັງ
ຜູ້ຊອບທຳແລະຜູ້ບໍ່ຊອບທຳ ຈະຖືກຊົງບັນດານໃຫ້ເປັນຄືນມາຈາກຕາຍ. 16ໃນຂໍ້ນີ້ຂ້າພະເຈົ້າ
ເອງເໝືອນກັນ ຈຶ່ງອົດສາພະຍາຍາມໃຫ້ມີໃຈສຳນຶກຜິດແລະຊອບອັນເສາະໃສຕໍ່ພຣະພັກ ພຣະ-
ເຈົ້າ ແລະຕໍ່ມະນຸດຢູ່ສະເໝີ. 17ຄັນລ່ວງມາຫລາຍປີແລ້ວຂ້າພະເຈົ້າໄດ້ນຳເອົາຂອງທານມາສູ່ຊົນ
ຊາດຂອງຂ້າພະເຈົ້າ ແລະໄດ້ຖວາຍເຄື່ອງບູຊາ. 18ໃນລະຫວ່າງນັ້ນ ເມື່ອຂ້າພະເຈົ້າຊຳລະຕົວ
ແລ້ວ ເຂົາໄດ້ພົບຂ້າພະເຈົ້າຢູ່ໃນບໍລິເວນພຣະວິຫານກໍບໍ່ໄດ້ພົບຂ້າພະເຈົ້າຢູ່ກັບຫລາຍຄົນ ຫລື
ກຳລັງກໍ່ຄວາມວຸ້ນວາຍ. 19ແຕ່ກໍມີພວກຢິວລາງຄົນມາຈາກແຂວງອາເຊຍ ຖ້າຄົນເຫລົ່ານັ້ນມີ
ເລື່ອງອັນໃດຕໍ່ສູ້ຂ້າພະເຈົ້າ ເຂົາຄວນຈະມາສະເໜີຕົວທີ່ນີ້ຟ້ອງຂ້າພະເຈົ້າຕໍ່ໜ້າທ່ານ. 20ຫລືໃຫ້
ຄົນເຫລົ່ານີ້ເອງກ່າວເລື່ອງຄວາມຜິດທີ່ເຂົາໄດ້ເຫັນ ເມື່ອຂ້າພະເຈົ້າຢືນຢູ່ຕໍ່ໜ້າສານສູງສຸດນັ້ນ.
21ເວັ້ນໄວ້ແຕ່ຂໍ້ດຽວທີ່ຂ້າພະເຈົ້າໄດ້ຮ້ອງຂຶ້ນໃນຖ້າມກາງເຂົາວ່າ ‘ທີ່ຂ້າພະເຈົ້ານີ້ຖືກພິຈາລະນາ
ພິພາກສາຕໍ່ໜ້າທ່ານທັງຫລາຍໃນວັນນີ້ ກໍເພາະກ່ຽວກັບເລື່ອງການເປັນຄືນມາຈາກຕາຍ’.”

## ໂປໂລຖືກຄຸມຕົວ

22ແຕ່ ເຟລິກ ຮູ້ເລື່ອງທາງນັ້ນຄັກແນ່ສົມຄວນ ຈຶ່ງໄດ້ເລື່ອນການພິຈາລະນາຂອງເຂົາໄປ
ໂດຍກ່າວວ່າ, “ເມື່ອໃດນາຍພັນ ລີເຊຍ ລົງມາແລ້ວ ເຮົາຈະໄດ້ພິຈາລະນາຄວາມຂອງພວກ
ເຈົ້າ.” 23ແລ້ວ ເຟລິກ ໄດ້ສັ່ງໃຫ້ນາຍຮ້ອຍຄຸມຕົວ ໂປໂລ ໄວ້ ແຕ່ໄດ້ຜ່ອນພົ້ນຄວາມເຄັ່ງຄັດ ແລະ
ບໍ່ໃຫ້ຫ້າມຜູ້ໜຶ່ງຜູ້ໃດທີ່ເປັນເພື່ອນຂອງເພິ່ນທີ່ຢາກເຂົ້າມາບົວລະບັດ.

24ເມື່ອລ່ວງມາສອງສາມວັນແລ້ວ ເຟລິກ ກັບພັນລະຍາຊື່ ດູຊິນລາ ຜູ້ເປັນຊາດຢິວ ໄດ້ມາທ່ານ
ໃຫ້ເອີ້ນ ໂປໂລ ມາ ແລ້ວໄດ້ຟັງ ໂປໂລ ກ່າວເລື່ອງຄວາມເຊື່ອຖືໃນ ພຣະເຢຊູຄຣິດ. 25ຂະນະທີ່
ໂປໂລ ອ້າງເຖິງຄວາມຍຸດຕິທຳ, ການບັງຄັບໃຈ, ແລະການພິພາກສາທີ່ຈະມາພາຍໜ້ານັ້ນ
ເຟລິກ ກໍສະດຸ້ງຕົກໃຈ ຈຶ່ງກ່າວວ່າ, “ບັດນີ້ຈົ່ງໄປກ່ອນເທາະ ເມື່ອມີໂອກາດເຮົາຈະເອີ້ນທ່ານມາ
ອີກ.” 26ໃນເວລານັ້ນ ເຟລິກ ຫວັງໃຈວ່າ ໂປໂລ ຈະໃຫ້ເງິນສິນບົນແກ່ຕົນ ເຫດສັນນັ້ນທ່ານຈຶ່ງ
ເອີ້ນ ໂປໂລ ມາສົນທະນາຫລາຍເທື່ອ. 27ແຕ່ເມື່ອສອງປີລ່ວງໄປແລ້ວ ໂປກິໂອ ເຟຊະໂຕ ໄດ້ມາ
ຮັບລາຊະການແທນ ເຟລິກ ຝ່າຍ ເຟລິກ ຢາກໄດ້ຄວາມຊອບຈາກພວກຢິວ ຈຶ່ງຂັງ ໂປໂລປະໄວ້
ໃນຄຸກ.

# ບົດທີ 25

## ໂປໂລອຸທອນໄປເຖິງກາຍຊາ

1ອັນໜຶ່ງເມື່ອ ເຟຊະໂຕ ໄດ້ມາໃນແຂວງນັ້ນໄດ້ສາມວັນແລ້ວ ທ່ານຈຶ່ງອອກຈາກເມືອງ ກາຍ-
ຊາເຣຍ ຂຶ້ນໄປຍັງກຸງ ເຢຣູຊາເລັມ. 2ພວກປະໂລຫິດຕົນໃຫຍ່ແລະບັນດາຄົນສຳຄັນໃນພວກຢິວ
ໄດ້ມາເໜີຄະດີຂອງ ໂປໂລ ຕໍ່ທ່ານ. 3ແລະໄດ້ອ້ອນວອນຂໍທ່ານໂຜດຊ່ອຍໃນການຕໍ່ສູ້ໂປໂລ ຄື
ໃຫ້ທ່ານໄດ້ສົ່ງ ໂປໂລ ມາຍັງກຸງ ເຢຣູຊາເລັມ ເພາະເຂົາມີແຜນການຈະລັດຂ້າ ໂປໂລ ຢູ່ກາງທາງ
ເສຍ. 4ຝ່າຍ ເຟຊະໂຕ ຈຶ່ງຕອບວ່າ ໂປໂລ ນັ້ນຖືກຄຸມຂັງຢູ່ເມືອງ ກາຍຊາເຣຍ ແລະອີກໜ້ອຍໜຶ່ງ
ທ່ານເອງກໍຈະກັບໄປຍັງເມືອງນັ້ນ. 5ທ່ານໄດ້ເວົ້າວ່າ, "ເຫດສັນນັ້ນໃຫ້ບັນດາຜູ້ມີອຳນາດໃນ
ພວກທ່ານລົງໄປພ້ອມກັນກັບເຮົາ ຖ້າວ່າ ໂປໂລ ມີຜິດອັນໃດຈຶ່ງໃຫ້ເຂົາຟ້ອງສາ."

6ເມື່ອທ່ານພັກຢູ່ນຳເຂົາບໍ່ເກີນແປດຫລືສິບວັນແລ້ວ ກໍໄດ້ລົງໄປຍັງເມືອງ ກາຍຊາເຣຍ ແລະ
ມື້ໜ້ານັ້ນທ່ານໄດ້ນັ່ງໃນສານຕັດສິນ ແລະໄດ້ສັ່ງໃຫ້ພາຕົວ ໂປໂລ ເຂົ້າມາ. 7ເມື່ອ ໂປໂລ ເຂົ້າມາ
ແລ້ວ ພວກຢິວທີ່ລົງມາຈາກກຸງ ເຢຣູຊາເລັມ ກໍຢືນອ້ອມທ່ານໄວ້ ແລະກ່າວຄຳຟ້ອງອັນໜັກ
ຫລາຍປະການໃສ່ ຊຶ່ງເຂົາບໍ່ສາມາດຫາຫລັກຖານໄດ້. 8ຝ່າຍ ໂປໂລ ຈຶ່ງກ່າວແກ້ຄະດີວ່າ, "ຂ້າ-
ພະເຈົ້າບໍ່ໄດ້ເຮັດຜິດອັນໃດຕໍ່ກົດໝາຍຂອງພວກຢິວ, ຫລືຜິດຕໍ່ພຣະວິຫານ, ຫລືຕໍ່ ກາຍຊາ ກໍ
ດີ." 9ຝ່າຍ ເຟຊະໂຕ ຢາກໄດ້ຄວາມຊອບຈາກພວກຢິວ ຈຶ່ງຖາມ ໂປໂລ ວ່າ, "ເຈົ້າຢາກຂຶ້ນໄປຍັງ
ກຸງ ເຢຣູຊາເລັມ ເພື່ອຊຳລະຄວາມເລື່ອງນີ້ຕໍ່ໜ້າເຮົາທີ່ນັ້ນຫລື." 10ແຕ່ ໂປໂລ ໄດ້ຕອບວ່າ, "ຂ້າ-
ພະເຈົ້າກຳລັງຢືນຢູ່ຕໍ່ໜ້າສານຕັດສິນຂອງ ກາຍຊາ ຢູ່ແລ້ວ ກໍສົມຄວນຈະພິພາກສາຂ້າພະເຈົ້າ
ເສຍທີ່ນີ້ ຂ້າພະເຈົ້າບໍ່ໄດ້ເຮັດຜິດອັນໃດຕໍ່ພວກຢິວ ເໝືອນດັ່ງທ່ານຮູ້ຄັກແລ້ວ. 11ຖ້າຂ້າພະເຈົ້າ
ໄດ້ເຮັດຜິດ ຫລືໄດ້ເຮັດອັນໃດຄວນຈະມີໂທດເຖິງຕາຍ ຂ້າພະເຈົ້າກໍຍອມຕາຍດ້ວຍບໍ່ຂັດຂືນ
ແຕ່ຖ້າເລື່ອງທີ່ເຂົາຟ້ອງຂ້າພະເຈົ້ານັ້ນບໍ່ຈິງແລ້ວ ບໍ່ມີຜູ້ໃດມີອຳນາດຈະມອບຂ້າພະເຈົ້າໃຫ້ເຂົາ
ໄດ້ ຂ້າພະເຈົ້າຂໍອຸທອນໄປເຖິງ ກາຍຊາ." 12ຝ່າຍ ເຟຊະໂຕ, ເມື່ອໄດ້ຫາລືກັນກັບທີ່ປຶກສາແລ້ວ
ຈຶ່ງຕອບວ່າ, "ເຈົ້າໄດ້ຂໍອຸທອນໄປເຖິງ ກາຍຊາ ເຈົ້າກໍຈະໄດ້ໄປເຝົ້າ ກາຍຊາ."

## ໂປໂລຢູ່ຕໍ່ໜ້າກະສັດອາຄຣິປາ

13ແລະເມື່ອລ່ວງໄປລາງວັນແລ້ວ ກະສັດ ອາຄຣິປາ ແລະພະນ້ອງນາງ ເບນີເກ ກໍສະເດັດມາ
ຢ້ຽມຄຳນັບ ເຟຊະໂຕ ທີ່ເມືອງ ກາຍຊາເຣຍ. 14ໃນເວລາທີ່ກະສັດປະທັບຢູ່ທີ່ນັ້ນຫລາຍວັນ ເຟ-
ຊະໂຕ ກໍເລົ່າຄະດີຂອງ ໂປໂລ ໃຫ້ພຣະອົງຟັງວ່າ, "ມີຊາຍຄົນໜຶ່ງຊື່ ເຟລິກ ໄດ້ປະໄວ້ໃນຄຸກ.
15ຂະນະທີ່ຂ້າພະເຈົ້າຢູ່ກຸງ ເຢຣູຊາເລັມ ນັ້ນ ພວກປະໂລຫິດຕົນໃຫຍ່ກັບພວກເຖົ້າແກ່ຂອງພວກ
ຢິວ ໄດ້ມາສະເໜີຄະດີເລື່ອງຄົນນີ້ຂໍໃຫ້ຂ້າພະເຈົ້າຕັດສິນລົງໂທດໃສ່. 16ຂ້າພະເຈົ້າຈຶ່ງຕອບວ່າ
ບໍ່ແມ່ນທຳນຽມຂອງຊາວ ໂຣມ ທີ່ຈະມອບຕົວຈຳເລີຍ ກ່ອນທີ່ໂຈດກັບຈຳເລີຍມາພ້ອມໜ້າກັນ
ເພື່ອໃຫ້ຈຳເລີຍມີໂອກາດ ແກ້ຄະດີໃນຂໍ້ຫານັ້ນ. 17ດັ່ງນັ້ນພວກໂຈດໄດ້ມາພ້ອມກັນທີ່ນີ້ແລ້ວ
ຂ້າພະເຈົ້າກໍບໍ່ໄດ້ລໍຖ້າ ໃນວັນໜ້ານັ້ນຂ້າພະເຈົ້າໄດ້ນັ່ງໃນສານຕັດສິນແລະໄດ້ສັ່ງໃຫ້ພາຊາຍ
ນັ້ນເຂົ້າມາ. 18ເມື່ອພວກໂຈດຢືນຂຶ້ນແລ້ວ ເຂົາບໍ່ໄດ້ກ່າວຫາການຊົ່ວຮ້າຍໃສ່ຈຳເລີຍເໝືອນທີ່
ຂ້າພະເຈົ້າໄດ້ຄາດໄວ້ແລ້ວ. 19ເປັນແຕ່ພຽງບັນຫາຖຽງກັນດ້ວຍເລື່ອງລັດທິສາດສະໜາຂອງ

ເຂົາເອງ ແລະດ້ວຍຄົນຜູ້ໜຶ່ງຊື່ ເຢຊູ ທີ່ຕາຍໄປແລ້ວ ແຕ່ຝ່າຍ ໂປໂລ ຢືນຢັນວ່າຍັງເປັນຢູ່.
20ສ່ວນຂ້າພະເຈົ້າກໍຈົນປັນຍາວ່າຈະພິຈາລະນາບັນຫານີ້ຢ່າງໃດ ຈຶ່ງຖາມ ໂປໂລ ວ່າຢາກຂຶ້ນໄປ
ຍັງກຸງ ເຢຣູຊາເລັມ ໃຫ້ຊຳລະຄວາມທີ່ນັ້ນຫລືບໍ່. 21ແຕ່ເມື່ອ ໂປໂລ ໄດ້ອຸທອນຂໍໃຫ້ຮັກສາຕົວໄວ້
ໃຫ້ມະຫາກະສັດ[ກ] ຊົງເປັນຜູ້ຊຳລະຕັດສິນ ຂ້າພະເຈົ້າຈຶ່ງສັ່ງໃຫ້ຂັງຮັກຄົນນີ້ໄວ້ຈົນກວ່າຈະໄດ້
ສົ່ງຕົວໄປເຖິງ ກາຍຊາ.” 22ຝ່າຍ ອາຄຣິປາ ກໍຊົງກ່າວກັບ ເຟຊະໂຕ ວ່າ “ເຮົາກໍມີໃຈຢາກຟັງຄຳ
ຂອງຄົນນັ້ນເໝືອນກັນ” ເຟຊະໂຕ ຈຶ່ງທູນວ່າ, “ມື້ອື່ນທ່ານຈະໄດ້ຟັງ.”
23ມື້ໜ້ານັ້ນກະສັດ ອາຄຣິປາ ກັບພຣະນາງ ເບນີເກ ສະເດັດມາພ້ອມດ້ວຍບໍລິວານຢ່າງສະຫງ່າ
ຜ່າເຜີຍ ເຂົ້າໄປໃນຫໍໄຊພ້ອມດ້ວຍນາຍພັນແລະຄົນສຳຄັນທັງຫລາຍໃນນະຄອນນັ້ນ ແລ້ວ ເຟ-
ຊະໂຕ ໄດ້ສັ່ງໃຫ້ພາ ໂປໂລ ເຂົ້າມາ. 24ເຟຊະໂຕ ຈຶ່ງທູນວ່າ, “ຂ້າແດ່ກະສັດ ອາຄຣິປາ ແລະຮຽນ
ທ່ານທັງຫລາຍທີ່ຢູ່ດ້ວຍກັນກັບພວກຂ້າພະເຈົ້າທ່ານທັງຫລາຍໄດ້ເຫັນຄົນຜູ້ນີ້ ຄືຜູ້ທີ່ບັນດາພວກ
ຢິວ ໄດ້ອ້ອນວອນຂ້າພະເຈົ້າທັງໃນກຸງ ເຢຣູຊາເລັມ ແລະທີ່ນີ້ກໍດີ ດ້ວຍຮ້ອງວ່າຜູ້ນີ້ບໍ່ຄວນຈະມີຊີ-
ວິດຢູ່ຕໍ່ໄປ. 25ສ່ວນຂ້າພະເຈົ້າໄດ້ສັງເກດຮູ້ວ່າຄົນນີ້ບໍ່ໄດ້ເຮັດອັນໃດທີ່ຄວນຈະຕ້ອງຕາຍ ແຕ່
ເພາະຄົນນີ້ເອງໄດ້ອຸທອນໄປເຖິງມະຫາກະສັດ[ຂ] ແລ້ວຂ້າພະເຈົ້າຕັ້ງໃຈຈະສົ່ງລາວໄປ. 26ກ່ຽວ
ກັບເລື່ອງຄົນນີ້ຂ້າພະເຈົ້າບໍ່ມີລາຍງານອັນໃດຢ່າງຄັກແນ່ ພໍທີ່ຈະຖວາຍແດ່ມະຫາກະສັດເຈົ້າ
ເພາະສັນນັ້ນຂ້າພະເຈົ້າຈຶ່ງພາຄົນນີ້ອອກມາຕໍ່ໜ້າທ່ານທັງຫລາຍແລະຕໍ່ພຣະພັກກະສັດ ອາຄຣິ-
ປາ ເປັນຕົ້ນ ຫວັງວ່າເມື່ອໄຕ່ສວນແລ້ວຈະມີເລື່ອງພໍຈະຖວາຍລາຍງານໄປໄດ້. 27ເພາະຂ້າພະ-
ເຈົ້າເຫັນວ່າ ທີ່ຈະສົ່ງຄົນໂທດໄປດ້ວຍບໍ່ໄດ້ສົ່ງຂໍ້ກ່າວຫາໄປພ້ອມ ກໍເປັນການບໍ່ເໝາະສົມ.”

# ບົດທີ 26

## ໂປໂລແກ້ຄະດີຕໍ່ພຣະພັກອາຄຣິປາ

1ຝ່າຍກະສັດ ອາຄຣິປາ ຈຶ່ງຊົງກ່າວແກ່ໂປໂລວ່າ, “ເຮົາອະນຸຍາດໃຫ້ເຈົ້າແກ້ຕົວໄດ້” ດັ່ງນັ້ນ
ໂປໂລ ຈຶ່ງຍື່ນມືອອກກ່າວແກ້ຄະດີວ່າ,
2“ຂ້າແດ່ກະສັດ ອາຄຣິປາ, ຂ້າພຣະບາດຖືວ່າເປັນຄົນໂຊກດີທີ່ໄດ້ມີໂອກາດແກ້ຄະດີຕໍ່ພຣະ-
ພັກຝ່າພຣະບາດ ໃນວັນນີ້ ໃນ ເລື່ອງຂໍ້ຄະດີທັງປວງຊຶ່ງ ພວກ ຢິວ ກ່າວຫາຂ້າພຣະບາດນັ້ນ.
3ເພາະ ເປັນຕົ້ນ, ຝ່າຍພຣະບາດຊົງມີຄວາມຮູ້ຊຳນານໃນບັນດາຂະນົບທຳນຽມແລະບັນຫາ
ຕ່າງໆ ຂອງພວກຢິວແລ້ວ ເຫດສັນນັ້ນຂໍຝາຍພຣະບາດໄດ້ໂຜດຊົງທົນຟັງຂ້າພຣະບາດ.”
4“ພວກ ຢິວ ທັງປວງກໍຮູ້ຈັກຄວາມເປັນຢູ່ຂອງຂ້າພຣະບາດຕັ້ງແຕ່ໜຸ່ມນ້ອຍມາຄືໃນຫົວທີ່ຂ້າ-
ພຣະບາດໄດ້ຢູ່ຖ້າມກາງຊົນຊາດຂອງຂ້າພຣະບາດ ແລະໃນກຸງ ເຢຣູຊາເລັມ. 5ເຂົາກໍຮູ້ຈັກຂ້າ-
ພຣະບາດແຕ່ເດີມມາ ຖ້າເຂົາຈະຍອມເປັນພະຍານກໍເປັນໄດ້ ວ່າຂ້າພຣະບາດໄດ້ດຳເນີນຊີວິດ
ຕາມພວກທີ່ຖືສາດສະໜາຂອງພວກຂ້າພຣະບາດຢ່າງເຄັ່ງຄັດທີ່ສຸດ ຄືເປັນພວກ ຟາຣີຊາຍ.
6ບັດນີ້ທີ່ຂ້າພຣະບາດມາຢືນຢູ່ເພື່ອຖືກຊຳລະຕັດສິນ ກໍເນື່ອງດ້ວຍເລື່ອງມີຄວາມຫວັງໃຈໃນ
ພຣະສັນຍາ ຊຶ່ງ ພຣະເຈົ້າ ໄດ້ຊົງປະຕິຍານໄວ້ແກ່ບັນພະບຸລຸດຂອງພວກຂ້າພຣະບາດນັ້ນ.

[ກ]ຄື ຈັກກະພັດທີ່ນັບຖື. [ຂ]ຄື ຈັກກະພັດທີ່ນັບຖື.

7ພວກຂ້າພຣະບາດທັງສິບສອງຕະກຸນໄດ້ອິດສາປະຕິບັດທັງກາງເວັນແລະກາງຄືນ ດ້ວຍຫວັງ
ວ່າຈະບັນລຸເຖິງຄວາມສຳເລັດຕາມພຣະສັນຍານັ້ນ ຂ້າແດ່ກະສັດຜູ້ເປັນເຈົ້າ, ທີ່ພວກຢິວຟ້ອງ
ຂ້າພຣະບາດກໍຍ້ອນຄວາມຫວັງໃຈອັນນີ້ແຫລະ. 8ເຫດສັນໃດທ່ານທັງຫລາຍຈຶ່ງພາກັນຖືວ່າ
ການທີ່ພຣະເຈົ້າຊົງບັນດານໃຫ້ຄົນຕາຍເປັນຄືນມານັ້ນເປັນການເຫລືອເຊື່ອ." 9"ຝ່າຍຂ້າພຣະ-
ບາດເອງກໍເຄີຍຄຶດໃນໃຈວ່າ ຈຳເປັນຕ້ອງເຮັດຫລາຍຢ່າງເປັນການຂັດຂວາງພຣະນາມຂອງ
ພຣະເຢຊູໄທນາຊາເຣັດນັ້ນ. 10ສິ່ງເຫລົ່ານັ້ນຂ້າພຣະບາດໄດ້ເຮັດໃນກຸງເຢຣູຊາເລັມ ເມື່ອຂ້າ-
ພຣະບາດໄດ້ຮັບອຳນາດຈາກພວກປະໂລຫິດຕົນໃຫຍ່ແລ້ວ ຂ້າພຣະບາດເອງໄດ້ຈັບໄພ່ພົນຂອງ
ພຣະອົງຫລາຍຄົນໄປຂັງໄວ້ ແລະຄັນເຂົາຖືກລົງໂທດເຖິງຕາຍຂ້າພຣະບາດກໍລົງຄວາມເຫັນດີ
ດ້ວຍ. 11ຂ້າພຣະບາດໄດ້ລົງໂທດເຂົາຫລາຍເທື່ອໃນໂຮງທຳມະເທດສະໜາທົ່ວໄປ ແລະໄດ້
ພະຍາຍາມບັງຄັບເຂົາໃຫ້ກ່າວຄຳໝິ່ນປະໝາດຕໍ່ພຣະເຈົ້າ ແລະເພາະຂ້າພຣະບາດຄຽດແຄ້ນ
ເຂົາຫລາຍ ເຖິງຈະແມ່ນໃນຫົວເມືອງຕ່າງປະເທດ ຂ້າພຣະບາດກໍໄດ້ຕິດຕາມໄປຂົ່ມເຫງເຂົາ."

## ໂປໂລເລົ່າເລື່ອງການກັບໃຈຂອງຕົນ

*(ກຈກ 9:1-19; 22:6-16)*

12"ດັ່ງນັ້ນຂ້າພຣະບາດໄດ້ເດີນທາງໄປຍັງເມືອງດາມາເຊ ໄດ້ຖືອຳນາດແລະຮັບຄຳສັ່ງຈາກ
ພວກປະໂລຫິດຕົນໃຫຍ່. 13ຂ້າແດ່ກະສັດຜູ້ເປັນເຈົ້າ, ໃນເວລາທ່ຽງວັນເມື່ອກຳລັງເດີນທາງໄປ
ຂ້າພຣະບາດໄດ້ເຫັນແສງສະຫວ່າງກ້າກວ່າແສງພະອາທິດສ່ອງລົງມາຈາກຟ້າອ້ອມຮອບຂ້າ-
ພຣະບາດກັບຄົນທັງຫລາຍທີ່ໄປນຳ. 14ເມື່ອພວກຂ້າພຣະບາດທຸກຄົນລົ້ມລົງເທິງດິນ ຂ້າພຣະ-
ບາດໄດ້ຍິນພຣະສຸລະສຽງກ່າວມາເປັນພາສາເຮັບເຣີ ຖາມຂ້າພຣະບາດວ່າ 'ໂຊໂລ, ໂຊໂລ
ເອີຍ, ເຈົ້າຂົ່ມເຫງເຮົາເຮັດຫຍັງ ທີ່ເຈົ້າຖີບເຫລັກກະຕັກນັ້ນກໍເປັນການເຈັບແກ່ຕົວເອງ.' 15ຂ້າ-
ພຣະບາດຈຶ່ງທູນຖາມວ່າ 'ທ່ານເອີຍ, ທ່ານແມ່ນໃຜ' ຝ່າຍອົງພຣະຜູ້ເປັນເຈົ້າຊົງຕອບວ່າ 'ເຮົາ
ຄືເຢຊູທີ່ເຈົ້າຂົ່ມເຫງນັ້ນແຫລະ.' 16ແຕ່ຈົ່ງລຸກຂຶ້ນແລະຢືນຢູ່ ເພາະເພື່ອການນີ້ແຫລະ, ເຮົາໄດ້
ປະກົດແກ່ເຈົ້າ ຄືເພື່ອຈະຕັ້ງເຈົ້າໄວ້ໃຫ້ເປັນຜູ້ຮັບໃຊ້ແລະເປັນພະຍານເຖິງເຫດການທີ່ເຈົ້າໄດ້
ເຫັນແລ້ວ ກັບທັງເຫດການທີ່ເຮົາຈະປະກົດແກ່ເຈົ້າໃນພາຍໜ້າ. 17ເຮົາຈະໂຜດເຈົ້າໃຫ້ພົ້ນຈາກ
ພົນລະເມືອງນີ້ ແລະຈາກຄົນຕ່າງຊາດທີ່ເຮົາຈະໃຊ້ເຈົ້າໄປຫານັ້ນ. 18ເພື່ອຈະໃຫ້ເຈົ້າໄຂຕາເຂົາ
ເພື່ອເຂົາຈະກັບຈາກຄວາມມືດມາເຖິງຄວາມສະຫວ່າງ ແລະຈາກອຳນາດຂອງຊາຕານມາເຖິງ
ພຣະເຈົ້າ ເພື່ອເຂົາຈະໄດ້ຮັບການໃຫ້ອະໄພຄວາມຜິດບາບ ເພື່ອຈະໄດ້ມີສ່ວນດ້ວຍກັນກັບຄົນ
ທັງຫລາຍທີ່ຖືກຊົງຊຳລະໃຫ້ບໍລິສຸດໂດຍຄວາມເຊື່ອໃນເຮົານັ້ນ."

## ໂປໂລຮັບເປັນພະຍານຕໍ່ຄົນຢິວແລະຄົນຕ່າງຊາດ

19"ຂ້າແດ່ກະສັດອາຄຣິປາ, ເມື່ອເປັນດັ່ງນັ້ນແລ້ວຂ້າພຣະບາດບໍ່ໄດ້ຂັດຂືນນິມິດຊຶ່ງມາຈາກ
ຟ້າສະຫວັນ. 20ແຕ່ຂ້າພຣະບາດໄດ້ປະກາດແກ່ຄົນທັງຫລາຍຕັ້ງແຕ່ເມືອງດາມາເຊ, ແລະໃນ
ກຸງເຢຣູຊາເລັມ, ແລະແກ່ຊາວຕ່າງປະເທດໃຫ້ເຂົາຖິ້ມໃຈເກົ່າເອົາໃຈໃໝ່ຕ່າວຄືນມາຫາພຣະ-
ເຈົ້າ ແລະເຮັດການຊຶ່ງສົມກັບການກັບໃຈໃໝ່ແລ້ວ. 21ເພາະເຫດນີ້ແຫລະ, ພວກຢິວຈຶ່ງໄດ້ຈັບ
ຂ້າພຣະບາດໃນບໍລິເວນພຣະວິຫານ ແລະພະຍາຍາມຈະຂ້າຂ້າພຣະບາດເສຍ. 22ຂ້າພຣະບາດ

ໄດ້ຮັບຄວາມຊ່ວຍຊື່ງມາຈາກ ພຣະເຈົ້າ ເຖິງທຸກວັນນີ້ ດັ່ງນັ້ນຂ້າພຣະບາດຈຶ່ງຢືນຢູ່ເປັນພະ-
ຍານຕໍ່ຜູ້ໃຫຍ່ແລະຜູ້ນ້ອຍ ຂ້າພຣະບາດບໍ່ເວົ້າເລື່ອງອື່ນ ນອກຈາກເລື່ອງຊຶ່ງບັນດາຜູ້ປະກາດ
ພຣະທຳກັບ ໂມເຊ ໄດ້ກ່າວໄວ້ວ່າຈະເກີດຂຶ້ນນັ້ນ. [23]ຄືວ່າຖ້າ ພຣະຄຣິດ ຕ້ອງທົນທຸກທໍລະມານ
ແລະຊົງເປັນຜູ້ຕົ້ນໃນການຄືນພຣະຊົນແລ້ວພຣະອົງຈະຊົງເປັນຜູ້ນຳຄວາມສະຫວ່າງມາສະແດງ
ແກ່ພົນລະເມືອງແລະແກ່ຄົນຕ່າງຊາດ."

## ໂປໂລທູນຊັກຊວນອາຄຣິປາໃຫ້ຊົງຮັບເຊື່ອ

[24]ເມື່ອ ໂປໂລ ກຳລັງແກ້ຄະດີຢ່າງນັ້ນ ເຟຊະໂຕ ຈຶ່ງຮ້ອງສຽງດັງຂຶ້ນວ່າ, "ໂປໂລ ເອີຍ, ເຈົ້າ
ເປັນບ້າໄປແລ້ວ ການຮຽນຮູ້ຫລາຍຂອງເຈົ້າກຳລັງເຮັດໃຫ້ເຈົ້າເປັນບ້າໄປເສຍ." [25]ແຕ່ ໂປໂລ
ໄດ້ຕອບວ່າ, "ໂອ ພະນະທ່ານ ເຟຊະໂຕ ທີ່ນັບຖື, ຂ້າພະເຈົ້າບໍ່ໄດ້ເປັນບ້າແຕ່ກ່າວຕາມສັດຈິງ
ແລະສະຕິອັນປົກກະຕິ. [26]ດ້ວຍວ່າທ່ານກະສັດຊົງຊາບຂໍ້ຄວາມເຫລົ່ານີ້ດີແລ້ວ ຂ້າພະເຈົ້າຈຶ່ງ
ກ້າທູນຕໍ່ພຣະອົງ ເພາະຂ້າພະເຈົ້າເຊື່ອແນ່ວ່າ, ບໍ່ມີຈັກຢ່າງໃນບັນດາເຫດການເຫລົ່ານີ້ທີ່ພົ້ນ
ຈາກພຣະເນດຂອງພຣະອົງໄປເພາະເຫດເຫລົ່ານີ້ບໍ່ໄດ້ເຮັດໃນບ່ອນລັບລີ້. [27]ຂ້າແດ່ກະສັດ ອາ-
ຄຣິປາ, ຝ່າພຣະບາດເຊື່ອຄຳພີຜູ້ປະກາດພຣະທຳຫລືບໍ່ ຂ້າພຣະບາດຮູ້ວ່າຝ່າພຣະບາດຊົງເຊື່ອ
ຢູ່." [28]ກະສັດ ອາຄຣິປາ ຈຶ່ງຊົງກາວກັບ ໂປໂລ ວ່າ, "ເຈົ້າຢາກຊວນເຮົາໃຫ້ເປັນ ຄຣິສະຕຽນ ດ້ວຍ
ຄຳຊັກຊວນພຽງເລັກໜ້ອຍຢ່າງນັ້ນບໍ່."[ກ] [29]ໂປໂລ ຈຶ່ງທູນວ່າ, "ຈຳເພາະພຣະພັກ ພຣະເຈົ້າ
ຂ້າພຣະບາດປາດຖະໜາບໍ່ວ່າຄຳຊັກຊວນໜ້ອຍຫລືຫລາຍ[ຂ] ຈະອ້ອນວອນຂໍເພື່ອວ່າບໍ່ແມ່ນແຕ່
ຝ່າພຣະບາດອົງດຽວ ແຕ່ຄົນທັງປວງທີ່ຟັງຂ້າພຣະບາດໃນວັນນີ້ເໝືອນກັນ ຈະກາຍເປັນເໝືອນ
ຢ່າງຂ້າພຣະບາດເວັ້ນໄວ້ແຕ່ເຄື່ອງຜູກມັດນີ້."

[30]ແລ້ວກະສັດກໍຊົງລຸກຂຶ້ນກັບຜູ້ປົກຄອງ ແລະພະນ້ອງນາງ ເບນິເກ ແລະຄົນທັງປວງທີ່ນັ່ງຢູ່
ດ້ວຍກັນນັ້ນ. [31]ເມື່ອອອກໄປແລ້ວກໍພາກັນເວົ້າວ່າ, "ຄົນຜູ້ນີ້ບໍ່ເຮັດສິ່ງໃດທີ່ສົມຄວນຈະຖືກໂທດ
ເຖິງຕາຍ ຫລືຖືກມັດໄວ້ກໍດີ." [32]ກະສັດ ອາຄຣິປາ ໄດ້ເວົ້າກັບ ເຟຊະໂຕ ວ່າ, "ຖ້າຜູ້ນີ້ບໍ່ໄດ້ອຸທອນ
ໄປເຖິງ ກາຍຊາ ຈະປ່ອຍເສຍກໍໄດ້."

# ບົດທີ 27

## ໂປໂລລົງສະເພົາໄປສູ່ໂຣມ

[1]ເມື່ອຕັ້ງໃຈວ່າຈະໃຫ້ພວກເຮົາເດີນທາງເຮືອສະເພົາໄປຍັງປະເທດ ອີຕາເລຍ ເຂົາຈຶ່ງມອບ
ໂປໂລ ກັບນັກໂທດອື່ນລາງຄົນໄວ້ກັບນາຍຮ້ອຍຄົນໜຶ່ງຊື່ ຢູລີໂອ ເປັນນາຍທະຫານໃນກອງທັບ
ຂອງມະຫາກະສັດ.[ຂ] [2]ເຂົາທັງຫລາຍຈຶ່ງລົງ ເຮືອລຳໜຶ່ງທີ່ມາຈາກ ເມືອງ ອາຣະມິດ ທີ່ກຳລັງຈະ
ອອກໄປຍັງທ່າຕ່າງໆ ຕາມແຂວງ ອາເຊຍ ແລ້ວເຮືອນັ້ນກໍອອກໄປ ມີຊາຍຜູ້ໜຶ່ງຊື່ ອາຣິດຕາ-
ໂຂ ໄທເມືອງ ເທຊະໂລນິກ ແຂວງ ມາເກໂດເນຍ ໄດ້ໄປພ້ອມກັນກັບພວກເຮົາ. [3]ຕົກມື້ໜ້າພວກ
ເຮົາໄດ້ຈອດທີ່ ເມືອງ ຊີໂດນ ຝ່າຍ ຢູລີໂອ ມີໃຈເມດຕາຕໍ່ ໂປໂລ ຈຶ່ງອະນຸຍາດໃຫ້ໄປຫາມິດຫາຍ

---

[ກ]ແທນທີ່ຈະວ່າ "ດ້ວຍຄຳຊັກຊວນພຽງເລັກນ້ອຍຢ່າງນັ້ນບໍ່" ກໍອາດຈະເວົ້າໄດ້ວ່າ "ໄວແທ້ໜໍ" [ຂ]ແທນທີ່ຈະວ່າ "ບໍ່ວ່າຄຳຊັກຊວນໜ້ອຍຫລືຫລາຍ" ກໍອາດຈະເວົ້າໄດ້ວ່າ "ບໍ່ວ່າໄວຫລືຊ້າ"
[ຂ]ຄື ຈັກກະພັດທີ່ນັບຖື. [ຂ]ຄື ລົມຕາເວັນອອກສ່ຽງເໜືອ.

ເພື່ອໃຫ້ເຂົາບົວລະບັດເພິ່ນ. 4ຄັນເຮືອອອກຈາກທີ່ນັ້ນແລ້ວ ພວກເຮົາໄດ້ລຽບເກາະ ກຸບໂຣໄປ
ທາງຫລີກທວນລົມ ເພາະຖືກລົມຂັດຂວາງ. 5ເມື່ອຂ້າມທະເລທີ່ຊື່ກັບແຂວງ ກີລີເກຍ ແລະ
ແຂວງ ປຳຟີເລຍ ນັ້ນກໍມາເຖິງເມືອງ ມີຣາ ໃນແຂວງ ລີເກຍ. 6ທີ່ນັ້ນນາຍຮ້ອຍໄດ້ພົບເຮືອລຳໜຶ່ງ
ທີ່ມາຈາກເມືອງ ອາເລັກຊັນເດຍ ທີ່ຈະໄປຍັງປະເທດ ອີຕາເລຍ ທ່ານຈຶ່ງໃຫ້ພວກເຮົາລົງເຮືອ
ລຳນັ້ນ. 7ພວກເຮົາໄດ້ໄປຊ້າໆ ເປັນເວລາຫລາຍວັນສົມຄວນ ແລະໄດ້ມາເຖິງເມືອງ ກະນີໂດ
ດ້ວຍຄວາມຍາກລຳບາກ ເມື່ອມີລົມຂັດຂວາງ ພວກເຮົາຈຶ່ງລຽບເກາະ ກະເຣເຕ ໄປທາງຫລີກ
ທວນລົມ ຊື່ກັບແຫລມຊັນໂມເນ. 8ເມື່ອໄດ້ລຽບເກາະນັ້ນໄປດ້ວຍຄວາມຍາກລຳບາກ ພວກເຮົາ
ຈຶ່ງມາເຖິງບ່ອນໜຶ່ງຊື່ວ່າທ່າງາມທ່ານີ້ຢູ່ໃກ້ເມືອງ ລາເຊອາ.

9ຄັນເສຍເວລາໄປຫລາຍສົມຄວນແລ້ວ ແລະການເດີນເຮືອກໍອາດເປັນອັນຕະລາຍເພາະຍາມ
ເທດສະການອົດອາຫານນັ້ນຜ່ານໄປແລ້ວ ໂປໂລ ຈຶ່ງເຕືອນສະຕິ. 10ໂດຍກ່າວແກ່ເຂົາວ່າ,
"ທ່ານທັງຫລາຍເອີຍ, ເຮົາເຫັນວ່າການເດີນທາງຄາວນີ້ຈະມີການອັນຕະລາຍແລະຄວາມເສຍ
ຫາຍຫລາຍ ບໍ່ແມ່ນແຕ່ຂອງບັນທຸກກັບເຮືອເທົ່ານັ້ນ ແຕ່ຊີວິດຂອງເຮົາທັງຫລາຍດ້ວຍ." 11ແຕ່
ນາຍຮ້ອຍເຊື່ອຄຳນາຍທ້າຍແລະເຈົ້າຂອງເຮືອ ຫລາຍກວ່າເຊື່ອຄຳທີ່ ໂປໂລ ເວົ້ານັ້ນ. 12ແລະ
ເພາະວ່າທ່າງາມນັ້ນບໍ່ເໝາະພໍກັບການຈອດໃນລະດູໜາວ ຄົນສ່ວນຫລາຍຈຶ່ງເຫັນດີໃຫ້ອອກໄປ
ຈາກທີ່ນັ້ນ ເພື່ອຖ້າເປັນໄດ້ຈະໄປເຖິງເມືອງ ຟອຍນິກ ແລ້ວຈະຈອດຢູ່ທີ່ນັ້ນຕະຫລອດລະດູ
ໜາວ ເມືອງ ຟອຍນິກ ນັ້ນເປັນທ່າເຮືອຂອງເກາະ ກະເຣເຕ ຢູ່ເບື້ອງທິດຕາເວັນຕົກສຽງໃຕ້ກັບ
ສຽງເໜືອ.

## ເກີດລົມພະຍຸທີ່ ທະເລ

13ເມື່ອລົມທິດໃຕ້ພັດມາຄ່ອຍໆ ເຂົາກໍຄຶດວ່າໄດ້ສົມຄວາມມຸ້ງໝາຍແລ້ວ ຈຶ່ງພາກັນຖອນ
ສະໝໍຂຶ້ນ ແລ້ວເດີນລຽບຕາມເກາະ ກະເຣເຕ ໄປ. 14ແຕ່ເມື່ອເດີນໄປບໍ່ເຖິງປານໃດ ເຮືອກໍຖືກ
ລົມພະຍຸກ້າຊື່ວ່າ ຢູຣາກີໂລ [a] ພັດມາຈາກເກາະນັ້ນ. 15ຄັນເຮືອຖືກລົມພະຍຸຕ້ານລົມບໍ່ໄຫວ
ພວກເຮົາຈຶ່ງປ່ອຍມັນໄປຕາມລົມ. 16ເມື່ອລຽບໄປທາງຫລີກທວນລົມທາງເກາະນ້ອຍແຫ່ງໜຶ່ງຊື່
ກາວດາ ພວກເຮົາໄດ້ມັດເຮືອນ້ອຍໄວ້ໂດຍຍາກ. 17ເມື່ອຍົກເຮືອນ້ອຍຂຶ້ນແລ້ວ ພວກເຮົາກໍເອົາ
ເຊືອກມັດໂອບເຮືອສະເພົາ ແລະເພາະຢ້ານວ່າຈະຄຸງຫາດຊາຍຊື່ຊີຣະຕີ ເຂົາຈຶ່ງລົດໃບເຮືອລົງ
ເສຍແລ້ວຖືກໄຫລໄປຕາມລົມ. 18ຄັນຕົກມື້ໜ້າມາເຂົາກໍຕັ້ງຕົ້ນຂົນຂອງບັນທຸກຖິ້ມເພາະຖືກພັດ
ໄປມາຢ່າງເຕັມທີ່ດ້ວຍລົມພະຍຸໃຫຍ່. 19ແລະໃນວັນຖ້ວນສາມເຂົາໄດ້ເອົາເຄື່ອງໃຊ້ໃນເຮືອຖິ້ມ
ເສຍດ້ວຍມືຂອງເຂົາເອງ. 20ເມື່ອຕາເວັນແລະດາວບໍ່ໄດ້ສ່ອງແສງຫລາຍວັນແລ້ວ ແລະພວກ
ເຮົາຍັງຖືກລົມພະຍຸໃຫຍ່ຢູ່ ຄວາມຫວັງທີ່ພວກເຮົາຈະລອດພົ້ນໄດ້ນັ້ນກໍໝົດໄປ.

21ເມື່ອເຂົາອົດອາຫານມາເຖິງແລ້ວ ໂປໂລ ຈຶ່ງຢືນຂຶ້ນຖ້າມກາງເຂົາເວົ້າວ່າ, "ທ່ານທັງຫລາຍ
ເອີຍ, ພວກທ່ານຄວນໄດ້ຟັງເຮົາ ແລະບໍ່ຄວນອອກຈາກເກາະ ກະເຣເຕ ແລ້ວຈະໄດ້ພົ້ນຈາກ
ອັນຕະລາຍແລະຈາກການເສຍສິ່ງຂອງຢ່າງນີ້. 22ບັດນີ້ເຮົາກໍເຕືອນສະຕິທ່ານທັງຫລາຍໃຫ້ຊື່ນ
ໃຈເທາະ ດ້ວຍວ່າໃນພວກທ່ານຈະບໍ່ມີຜູ້ໃດເສຍຊີວິດ ຈະເສຍກໍແຕ່ເຮືອເທົ່ານັ້ນ. 23ເພາະວ່າ
ໃນຄືນນີ້ເອງມີເທວະດາຕົນໜຶ່ງຂອງພຣະຜູ້ເປັນເຈົ້າຂອງເຮົາ ທີ່ເຮົາບົວລະບັດນັ້ນ ໄດ້ມາຢືນຢູ່

ໃກ້ເຮົາ, 24ແລ້ວກ່າວວ່າ 'ໂປໂລເອີຍ, ຢ່າຊູ່ຢ້ານ ເຈົ້າຈະຕ້ອງເຂົ້າເຝົ້າກາຍຊາ ສ່ວນຄົນທັງ
ປວງທີ່ຢູ່ໃນເຮືອກັບເຈົ້ານັ້ນ ພຣະເຈົ້າຈະຊົງໂຜດໃຫ້ພົ້ນຕາຍເພາະເຫັນແກ່ເຈົ້າ. 25ເພາະສັນ-
ນັ້ນທ່ານທັງຫລາຍເອີຍ, ຈົ່ງຊື່ນໃຈເທາະ ເພາະເຮົາໄວ້ວາງໃຈໃນພຣະເຈົ້າ ວ່າຈະເປັນໄປ
ເໝືອນຢ່າງທີ່ຊົງກ່າວໄວ້ແກ່ເຮົານັ້ນ. 26ແຕ່ພວກເຮົາກໍຈະຕ້ອງຄຸງເກາະບ່ອນໜຶ່ງ."

27ເມື່ອຖ້ວນຄືນທີ່ສິບສີ່ພວກເຮົາກໍຍັງຖືກພັດໄປພັດມາໃນທະເລອະດີອາ ປະມານທ່ຽງຄືນ
ພວກລູກເຮືອຄາດວ່າມາໃກ້ບົກແລ້ວ. 28ຄັນຢັ່ງເບິ່ງນ້ຳກໍເຫັນວ່າເລິກຊາວວາ ແລະເມື່ອໄປຕື່ມ
ໜ້ອຍໜຶ່ງກໍຢັ່ງເບິ່ງອີກ ເຫັນວ່າເລິກສິບຫ້າວາ. 29ເຂົາກໍຢ້ານວ່າພວກເຮົາຈຳຕຳຝັ່ງບ່ອນມີຫີນ
ຈຶ່ງຖິ້ມສະໝໍທາງທ້າຍສີ່ອັນ ແລ້ວພາກັນອ້ອນວອນຂໍໃຫ້ແຈ້ງງ່າຍ. 30ເມື່ອພວກລູກເຮືອພະຍາ-
ຍາມຈະອອກໜີຈາກເຮືອ ເຂົາໄດ້ຢ່ອນເຮືອນ້ອຍລົງນ້ຳຕັ້ງຕີຈະຖິ້ມສະໝໍລົງທາງຫົວເຮືອ.
31ໂປໂລຈຶ່ງກ່າວແກ່ນາຍຮ້ອຍແລະພວກທະຫານວ່າ, "ຖ້າຄົນເຫລົ່ານີ້ບໍ່ຢູ່ໃນເຮືອແລ້ວ ທ່ານ
ທັງຫລາຍຈະພົ້ນບໍ່ໄດ້." 32ແລ້ວພວກທະຫານຈຶ່ງຕັດເຊືອກທີ່ຜູກເຮືອນ້ອຍໃຫ້ຕົກນ້ຳໄຫລໄປ
ເສຍ.

33ເມື່ອໃກ້ຈະຮຸ່ງແຈ້ງ ໂປໂລໄດ້ເຊີນຊວນຄົນທັງປວງໃຫ້ຮັບປະທານອາຫານແລະກ່າວວ່າ,
"ວັນນີ້ໄດ້ຄົບສິບສີ່ວັນແລ້ວ ທີ່ທ່ານທັງຫລາຍລໍຄອຍຢູ່ແລະອົດຢາກບໍ່ໄດ້ຮັບປະທານອາຫານ
ອັນໃດຕະຫລອດມາ. 34ສັນນັ້ນເຮົາເຊີນຊວນທ່ານທັງຫລາຍໃຫ້ຮັບປະທານອາຫານເສຍ ເພາະ
ການນີ້ເປັນທີ່ຮັກສາຊີວິດຂອງທ່ານໃຫ້ພົ້ນ ດ້ວຍວ່າເສັ້ນຜົມຂອງຜູ້ໜຶ່ງຜູ້ໃດໃນພວກທ່ານຈະບໍ່
ເສຍໄປຈັກເສັ້ນດຽວ." 35ຄັນກ່າວດັ່ງນັ້ນແລ້ວໂປໂລຈຶ່ງຢິບເອົາເຂົ້າຈີ່, ຂອບພຣະຄຸນພຣະເຈົ້າ
ຕໍ່ໜ້າຄົນທັງປວງ, ແລ້ວຫັກຕັ້ງຕົ້ນຮັບປະທານ. 36ສ່ວນຄົນທັງປວງກໍຊື່ນໃຈຂຶ້ນ ຈຶ່ງຮັບປະ-
ທານອາຫານດ້ວຍ. 37ອັນໜຶ່ງເຮົາທັງຫລາຍທີ່ຢູ່ໃນເຮືອນັ້ນ ຮ່ວມທັງໝົດສອງຮ້ອຍເຈັດສິບຫົກ
ຄົນ.[ກ] 38ເມື່ອຮັບປະທານອາຫານອີ່ມແລ້ວ ເຂົາໄດ້ຂົນເຂົ້າເປືອກຖິ້ມລົງທະເລເສຍເພື່ອໃຫ້
ເຮືອເບົາຂຶ້ນ.

## ເຮືອແຕກເສຍ

39ເມື່ອແຈ້ງແລ້ວເຂົາກໍບໍ່ຮູ້ວ່າເປັນແຜ່ນດິນອັນໃດ ແຕ່ເຂົາຫລຽວເຫັນອ່າວບ່ອນໜຶ່ງທີ່ມີຫາດ
ຈຶ່ງຕົກລົງກັນວ່າ ຖ້າເປັນໄປໄດ້ຈະໃຫ້ເຮືອເຂົ້າຄຸງຫາດນັ້ນ. 40ເຂົາຈຶ່ງຕັດສາຍສະໝໍຖິ້ມເສຍໃນ
ທະເລ ແລ້ວກໍແກ້ເຊືອກທີ່ມັດໂຫມ ແລະຊັກໃບຫົວເຮືອຂຶ້ນໃຫ້ຖືກລົມແລ່ນຊື່ເຂົ້າໄປຫາຝັ່ງ.
41ແຕ່ຄັນມາເຖິງຄອນບ່ອນໜຶ່ງເຂົາກໍໃຫ້ເຮືອຄຸງດິນເສຍ ຫົວເຮືອກໍຕິດແໜ້ນອອກບໍ່ໄດ້ ແຕ່
ທ້າຍເຮືອກໍແຕກອອກດ້ວຍກຳລັງຂອງຟອງນ້ຳ. 42ພວກທະຫານປຶກສາກັນວ່າຈະຂ້ານັກໂທດ
ທັງຫລາຍເສຍ ເພາະຢ້ານວ່າຈະມີຜູ້ໃດລອຍນ້ຳໜີໄປໄດ້. 43ແຕ່ນາຍຮ້ອຍມີໃຈຢາກໃຫ້ໂປໂລ
ພົ້ນຊີວິດຈຶ່ງຫ້າມພວກທະຫານບໍ່ໃຫ້ເຮັດຕາມຄວາມຄິດນັ້ນ ແລ້ວສັ່ງຄົນທັງຫລາຍທີ່ລອຍນ້ຳ
ເປັນ ໂຕນລົງນ້ຳກ່ອນຈຶ່ງໄປຫາຝັ່ງ. 44ຝ່າຍຄົນທັງຫລາຍທີ່ເຫລືອນັ້ນ ລາງຄົນກໍລອຍເຟືອໄມ້
ແປ້ນ, ລາງຄົນກໍລອຍເຟືອທ່ອນໄມ້ທີ່ຫັກຈາກເຮືອ ດັ່ງນັ້ນຄົນທັງຫລາຍກໍລອດເຖິງຝັ່ງທຸກຄົນ.

[ກ]ສຳເນົາກົກສະບັບເກົ່າແກ່ບາງສະບັບວ່າ "ເຈັດສິບກົກຄົນ" ຫລື "ປະມານເຈັດສິບຫົກຄົນ."

# ບົດທີ 28

## ໂປໂລເຖິງເກາະເມລິເຕ

1ຄັນພົ້ນໄພແລ້ວພວກເຮົາຈຶ່ງຮູ້ຈັກວ່າແກະນັ້ນຊື່ ເມລິເຕ. 2ຝ່າຍຊາວປ່າທີ່ເກາະນັ້ນໄດ້ສະ-
ແດງຄວາມເມດຕາຕໍ່ພວກເຮົາຢ່າງຜິດທຳມະດາ ຄືເຂົາໄດ້ດັງໄຟຕ້ອນຮັບພວກເຮົາເພາະຝົນຕົກ
ແລະໜາວຫລາຍ. 3ເມື່ອໂລເກັບຫລົວມັດໜຶ່ງມາວາງໃສ່ໄຟ ງູພິດໂຕໜຶ່ງອອກມາເພາະຄວາມ
ຮ້ອນ ຈຶ່ງຂົບມືໂປໂລຫ້ອຍຢູ່. 4ເມື່ອຊາວປ່າໄດ້ເຫັນສັດສາລະພິດຫ້ອຍຕິດຢູ່ໃນມືຂອງໂປໂລ
ເຂົາກໍເວົ້າກັນວ່າ, “ຄົນຜູ້ນີ້ຄົງເປັນຜູ້ຂ້າຄົນແທ້ ເຖິງແມ່ນວ່າລາວພົ້ນຈາກທະເລແລ້ວ ແຕ່ເວນ
ກຳຍັງບໍ່ຍອມໃຫ້ພົ້ນຕາຍ.” 5ແຕ່ບັດນັ້ນໂປໂລໄດ້ສັ່ນສັດນັ້ນໃຫ້ຕົກໃສ່ໄຟ ສ່ວນທ່ານເອງບໍ່ເປັນ
ອັນຕະລາຍຢ່າງໃດ. 6ຝ່າຍເຂົາພວກນັ້ນກໍຄອຍເບິ່ງຄຶດວ່າຈະເຫັນທ່ານໄຂ້ຂຶ້ນ ຫລືລົ້ມຕາຍໃນ
ທັນທີ ເມື່ອຄອຍເບິ່ງເຫິງແລ້ວເລີຍບໍ່ເຫັນອັນໃດຜິດທຳມະດາຈັກຢ່າງເກີດຂຶ້ນແກ່ທ່ານ ເຂົາຈຶ່ງ
ປ່ຽນໃຈເວົ້າວ່າທ່ານເປັນພະ.

7ອັນໜຶ່ງຢູ່ໃກ້ບ່ອນນັ້ນມີທີ່ດິນຊຶ່ງເປັນຂອງປັບລີໂອ ຜູ້ໃຫຍ່ໃນເກາະນັ້ນ ທ່ານຜູ້ນີ້ໄດ້ຕ້ອນ-
ຮັບພວກເຮົາແລະລ້ຽງໄວ້ເປັນແຂກຢ່າງດີຕະຫລອດສາມວັນ. 8ສ່ວນບິດາຂອງປັບລີໂອນອນຢູ່
ເປັນໄຂ້ແລະເປັນທ້ອງບິດ ໂປໂລຈຶ່ງເຂົ້າໄປຫາ ແລະເມື່ອໄຫວ້ວອນແລ້ວກໍວາງມືໃສ່ເພິ່ນແລະ
ເຮັດໃຫ້ດີພະຍາດ. 9ຄັນເກີດມີມາຢ່າງນັ້ນແລ້ວຄົນອື່ນໆ ທີ່ເກາະນັ້ນຊຶ່ງມີພະຍາດຕ່າງໆ ກໍມາ
ຫາ ແລະເຂົາກໍດີເໝືອນກັນ. 10ເຂົາໄດ້ໃກ້ກຽດພວກເຮົາຫລາຍຢ່າງ ເມື່ອພວກເຮົາລາອອກໄປ
ຈາກທີ່ນັ້ນ ເຂົາຈຶ່ງເອົາສິ່ງຂອງທີ່ພວກເຮົາຕ້ອງການມາໃສ່ເຮືອ.

## ໂປໂລເຖິງກຸງໂຣມ

11ຄັນລ່ວງໄປໄດ້ສາມເດືອນແລ້ວ ພວກເຮົາຈຶ່ງລົງເຮືອລຳໜຶ່ງ ຊຶ່ງມາຈາກເມືອງອາເລັກຊັນ-
ເດຍທີ່ຄ້າງຢູ່ເກາະນັ້ນ ຕະຫລອດລະດູໜາວ ມີຮູບ “ມີຖຸນ”[ກ] ເປັນເຄື່ອງໝາຍ. 12ພວກເຮົາ
ໄດ້ແວ່ທີ່ເມືອງຊີຣະກູຊາຍ ຈອດຢູ່ທີ່ນັ້ນສາມວັນ. 13ຈາກທີ່ນັ້ນພວກເຮົາໄດ້ອ້ອມໄປເຖິງເມືອງ
ເຣຄີໂອນ ມື້ໜ້ານັ້ນລົມທິດໃຕ້ກໍພັດມາ ແລະວັນຖ້ວນສອງພວກເຮົາໄດ້ເຖິງເມືອງໂປຕີໂອລອຍ.
14ທີ່ນັ້ນເຮົາໄດ້ພົບພວກພີ່ນ້ອງແລະຖືກເຊີນໃຫ້ພັກຢູ່ກັບເຂົາເປັນເວລາເຈັດວັນ ແລ້ວພວກເຮົາກໍ
ໄປເຖິງກຸງໂຣມ. 15ຄັນພວກພີ່ນ້ອງໃນກຸງໂຣມໄດ້ຍິນຂ່າວເຖິງພວກເຮົາ ເຂົາຈຶ່ງອອກມາຫາ
ພວກເຮົາທີ່ຕະຫລາດອາປີໂອ ທີ່ສາລາສາມຫລັງ ເມື່ອໂປໂລໄດ້ເຫັນເຂົາແລ້ວຈຶ່ງຂອບພຣະ-
ຄຸນພຣະເຈົ້າ ແລະມີໃຈຊື່ນບານຂຶ້ນ. 16ຄັນພວກເຮົາເຂົ້າໃນກຸງໂຣມແລ້ວ ເຂົາໄດ້ອະນຸຍາດ
ໃຫ້ໂປໂລຢູ່ຄົນດຽວຕ່າງຫາກ ໂດຍໃຫ້ມີທະຫານຄົນໜຶ່ງຍາມຮັກສາໄວ້.

## ໂປໂລປະກາດໃນກຸງໂຣມ

17ຄັນລ່ວງໄປໄດ້ສາມວັນແລ້ວໂປໂລໄດ້ເຊີນພວກຜູ້ໃຫຍ່ໃນພວກຢິວມາປະຊຸມກັນເມື່ອມາ
ພ້ອມໜ້າກັນແລ້ວທ່ານຈຶ່ງກ່າວແກ່ເຂົາວ່າ, “ພີ່ນ້ອງທັງຫລາຍເອີຍ, ເຖິງແມ່ນວ່າເຮົານີ້ບໍ່ໄດ້ເຮັດ
ຜິດສິ່ງໃດຕໍ່ພົນລະເມືອງ ຫລືຜິດຕໍ່ທຳນຽມຂອງບັນພະບຸລຸດເຮົາກໍຍັງຕ້ອງຖືກເປັນນັກໂທດມາ
ຈາກກຸງເຢຣູຊາເລັມ ແລະຖືກມອບໃຫ້ຢູ່ໃນມືຂອງຊາວໂຣມ. 18ຄັນພວກນັ້ນໄດ້ໄຕ່ສວນເຮົາ

[ກ]ແປວ່າ “ຝາແຝດ”

ແລ້ວກໍຢາກປ່ອຍເຮົາເສຍ ເພາະບໍ່ມີເຫດອັນທີ່ເຮົາຄວນຈະຕາຍ. [19]ແຕ່ເມື່ອພວກຢິວເວົ້າຄັດ-
ຄ້ານ ເຮົາກໍຈຳເປັນຕ້ອງອຸທອນເຖິງກາຍຊາ ແຕ່ບໍ່ແມ່ນເຮົາມີອັນໃດຈະຟ້ອງຊົນຮ່ວມຊາດຂອງ
ເຮົາ. [20]ດ້ວຍເຫດນີ້ແຫລະ, ເຮົາຈຶ່ງເຊີນທ່ານທັງຫລາຍມາເພື່ອຈະໄດ້ເຫັນໜ້າແລະເວົ້າກັບ
ພວກທ່ານ ເພາະທີ່ເຮົາຖືກລ່າມໂສ້ນີ້ກໍເນື່ອງດ້ວຍຄວາມຫວັງຂອງຊົນຊາດອິສຣາເອນ.” [21]ເຂົາ
ຈຶ່ງຕອບທ່ານວ່າ, “ຝ່າຍພວກເຮົາບໍ່ໄດ້ຮັບຈົດໝາຍຈາກແຂວງຢູດາຍກ່າວເຖິງທ່ານ ແລະບໍ່ມີ
ພີ່ນ້ອງຜູ້ໜຶ່ງຜູ້ໃດມາລາຍງານຫລືກ່າວສິ່ງບໍ່ດີກ່ຽວກັບທ່ານ. [22]ແຕ່ເຮົາທັງຫລາຍເຫັນສົມຄວນ
ຟັງທ່ານ ວ່າທ່ານຄຶດເຫັນຢ່າງໃດເພາະຝ່າຍນິກາຍນີ້ ພວກເຮົາຮູ້ວ່າຖືກຂັດຂວາງທຸກທີ່ທຸກ
ບ່ອນ.”

[23]ເມື່ອເຂົານັດວັນພົບກັບທ່ານ ຄົນຈຳນວນຫລາຍກວ່າເກົ່າໄດ້ມາຫາທີ່ບ່ອນພັກຂອງທ່ານ
ທ່ານຈຶ່ງກ່າວອະທິບາຍແກ່ເຂົາຕັ້ງແຕ່ເຊົ້າຈົນຄ່ຳ ເປັນພະຍານເຖິງລາຊະອານາຈັກຂອງພຣະ-
ເຈົ້າຢ່າງຄົບຖ້ວນ ແລະຊັກຊວນໃຫ້ເຂົາຮັບເຊື່ອໃນພຣະເຢຊູ ໂດຍໃຊ້ຂໍ້ຄວາມຈາກພຣະບັນ-
ຍັດຂອງໂມເຊ ແລະຈາກຄຳພີຂອງຜູ້ປະກາດພຣະທຳເປັນຫລັກ. [24]ລາງຄົນກໍຍອມເຊື່ອຄຳທີ່
ທ່ານກ່າວນັ້ນ ແຕ່ລາງຄົນກໍບໍ່ເຊື່ອ. [25]ເມື່ອຄວາມເຫັນບໍ່ລົງລອຍກັນເຂົາຈຶ່ງລາຈາກກັນໄປ
ຫລັງຈາກໂປໂລໄດ້ກ່າວຄຳໜຶ່ງຕື່ມອີກວ່າ, “ພຣະວິນຍານບໍລິສຸດໄດ້ຊົງກ່າວກັບບັນພະບຸລຸດ
ຂອງທ່ານທັງຫລາຍດ້ວຍເອຊາຢາຜູ້ປະກາດພຣະທຳຢ່າງຖືກຕ້ອງດີແລ້ວ. [26]ວ່າ,

‘ຈົ່ງໄປຫາພົນລະເມືອງນີ້ແລະກ່າວວ່າ
ເຈົ້າທັງຫລາຍຈະໄດ້ຍິນແທ້ ແຕ່ຈະບໍ່ເຂົ້າໃຈຈັກເທື່ອ
ຈະໄດ້ເຫັນແທ້ ແຕ່ຈະບໍ່ໄດ້ສັງເກດຈັກເທື່ອ.
[27] ດ້ວຍວ່າໃຈຂອງພົນລະເມືອງນີ້ກໍປຶກໜາ
ຫູກໍໜັກ, ຕາຂອງເຂົາກໍຫລັບເສຍ
ຢ້ານວ່າເຂົາຈະສັງເກດດ້ວຍຕາ
ແລະຈະໄດ້ຍິນດ້ວຍຫູ ແລະຈະຮູ້ດ້ວຍໃຈ
ແລ້ວຈະຕ່າວກັບມາ ແລະເຮົາຈະເຮັດໃຫ້ເຂົາດີ.’

[28]ເຫດສັນນີ້ທ່ານທັງຫລາຍຈົ່ງຮູ້ວ່າ ການທີ່ພຣະເຈົ້າຊົງໂຜດໃຫ້ພົ້ນນັ້ນກໍຖືກນຳໄປເຖິງຄົນ
ຕ່າງຊາດແລ້ວ ເຂົານັ້ນແຫລະ ຈະຮັບຟັງ.” [29][ເມື່ອໂປໂລກ່າວຄຳເຫລົ່ານີ້ແລ້ວ ພວກຢິວກໍ
ຈາກໄປ ແລະກຳລັງຖຽງກັນເອງຢູ່.]

[30]ໂປໂລໄດ້ອາໃສຢູ່ໃນເຮືອນທີ່ຕົນເຊົ່າເອງ ແລະໄດ້ຕ້ອນຮັບຄົນທັງປວງທີ່ມາຫາ. [31]ທັງ
ປະກາດລາຊະອານາຈັກຂອງພຣະເຈົ້າ ແລະສັ່ງສອນເລື່ອງອັນກ່ຽວກັບພຣະອົງເຈົ້າເຢຊູຄຣິດ
ຢ່າງເປີດເຜີຍ ໂດຍບໍ່ມີການຂັດຂວາງ.

* * *

# ຈົດໝາຍຂອງໂປໂລ ເຖິງຄຣິສຕະຈັກໃນກຸງ ໂຣມ

## ບົດທີ 1

### ຕົ້ນເຫດທີ່ພຣະເຈົ້າຊົງເອີ້ນໂປໂລເຂົ້າຮັບໃຊ້ປະກາດຂ່າວປະເສີດ

1ໂປໂລ ຜູ້ຮັບໃຊ້[ກ] ຂອງພຣະຄຣິດຄືພຣະເຢຊູ ຜູ້ທີ່ພຣະອົງຊົງເອີ້ນໃຫ້ເປັນອັກຄະສາວົກ
ແລະໄດ້ຊົງຄັດອອກຕັ້ງໄວ້ໃຫ້ປະກາດຂ່າວປະເສີດຂອງ ພຣະເຈົ້າ. 2ຄືຂ່າວປະເສີດທີ່ພຣະອົງ
ໄດ້ຊົງສັນຍາໄວ້ລ່ວງໜ້າ ໂດຍທາງຜູ້ປະກາດພຣະທຳຂອງພຣະອົງ ໃນພຣະຄຳພີອັນສັກສິດ.
3ຂ່າວປະເສີດນັ້ນກ່ຽວກັບພຣະລາຊະບຸດຂອງພຣະອົງຄື ພຣະເຢຊູຄຣິດ ເຈົ້າຂອງເຮົາທັງຫລາຍ
ຜູ້ຊົງບັງເກີດໃນເຊື້ອວົງຂອງ ດາວິດຝ່າຍເນື້ອກາຍ, 4ແຕ່ຝ່າຍ ພຣະວິນຍານ ແຫ່ງຄວາມບໍລິສຸດ
ນັ້ນ[ຂ] ຊົງບົ່ງໄວ້ດ້ວຍລິດທານຸພາບ ຄືໃນການທີ່ພຣະເຈົ້າ ໄດ້ຊົງບັນດານໃຫ້ເປັນຄືນມາຈາກ
ຕາຍວ່າເປັນ ພຣະບຸດຂອງ ພຣະເຈົ້າ. 5ໂດຍທາງພຣະອົງນີ້ແຫລະ, ເຮົາໄດ້ຮັບພຣະຄຸນແລະ
ຕຳແໜ່ງເປັນອັກຄະສາວົກ ເພື່ອເຫັນແກ່ພຣະນາມຂອງພຣະອົງ ໃຫ້ໄປປະກາດຖ້າມກາງຊົນ
ຊາດຕ່າງໆ ໃຫ້ເຂົາເຊື່ອຟັງ. 6ຮ່ວມທັງພວກເຈົ້າທີ່ ພຣະເຈົ້າ ຊົງເອີ້ນໃຫ້ເປັນໄພ່ພົນຂອງ ພຣະ-
ເຢຊູຄຣິດ ເໝືອນກັນ. 7ເຖິງ ບັນດາຄົນທັງຫລາຍທີ່ຢູ່ໃນ ກຸງໂຣມ ຜູ້ຊຶ່ງ ພຣະເຈົ້າ ຊົງຮັກແລະ
ຊົງເອີ້ນໃຫ້ເປັນໄພ່ພົນຂອງພຣະອົງ ຂໍໃຫ້ພຣະຄຸນແລະສັນຕິສຸກຊຶ່ງມາຈາກ ພຣະບິດາ ເຈົ້າຂອງ
ເຮົາທັງຫລາຍ ແລະຈາກ ພຣະເຢຊູຄຣິດ ເຈົ້າຈົ່ງມີຢູ່ກັບເຈົ້າທັງຫລາຍເທີ້ນ.

### ຂອບພຣະຄຸນໂດຍທາງການອ້ອນວອນ

8ກ່ອນອື່ນ ເຮົາຂໍຂອບພຣະຄຸນ ພຣະເຈົ້າ ຂອງ ເຮົາ ໂດຍທາງ ພຣະເຢຊູຄຣິດ ເພາະພວກເຈົ້າ
ດ້ວຍວ່າຄວາມເຊື່ອຂອງພວກເຈົ້າກຳລັງຊ່າລືໄປທົ່ວໂລກ. 9ເພາະ ພຣະເຈົ້າຜູ້ທີ່ເຮົາຮັບໃຊ້ດ້ວຍ
ຊີວິດຈິດໃຈ ໃນການປະກາດຂ່າວປະເສີດເລື່ອງ ພຣະບຸດຂອງພຣະອົງນັ້ນ ພຣະອົງຊົງເປັນ
ພະຍານຝ່າຍເຮົາວ່າ ເມື່ອເຮົາອ້ອນວອນນັ້ນ ເຮົາຄວນລະນຶກເຖິງພວກເຈົ້າຢູ່ສະເໝີບໍ່ຂາດ.
10ເຮົາທູນຂໍວ່າຖ້າເປັນທີ່ຊອບພຣະໄທ ພຣະເຈົ້າແລ້ວ ໃຫ້ເຮົາໄດ້ມີໂອກາດໃນທີ່ສຸດນີ້ໄປຢາມ
ພວກເຈົ້າໄດ້ດ້ວຍວິທີໜຶ່ງວິທີໃດ. 11ດ້ວຍວ່າເຮົາປາດຖະໜາຢາກເຫັນເຈົ້າທັງຫລາຍ ເພື່ອຈະ
ໄດ້ນຳຂອງປະທານຝ່າຍຈິດວິນຍານບາງຢ່າງມາໃຫ້ພວກເຈົ້າ, ເພື່ອເສີມກຳລັງໃຈຂອງພວກ
ເຈົ້າ. 12ຄືວ່າດ້ວຍຄວາມເຊື່ອຂອງເຮົາທັງສອງຝ່າຍນັ້ນຈະໄດ້ໜຸນໃຈກັນແລະກັນ. 13ພີ່ນ້ອງ
ທັງຫລາຍເອີຍ, ເຮົາຢາກໃຫ້ເຈົ້າຮູ້ວ່າ ເຮົາໄດ້ຕັ້ງໃຈຫລາຍເທື່ອແລ້ວວ່າຈະມາຢາມພວກເຈົ້າ
ເພື່ອຈະໄດ້ຮັບຜົນບາງຢ່າງໃນຖ້າມກາງພວກເຈົ້າ ເໝືອນດັ່ງໄດ້ຮັບຜົນໃນຖ້າມກາງຊາວຕ່າງ-
ປະເທດແລ້ວ ແຕ່ຈົນເຖິງບັດນີ້ກໍຍັງມີເຫດຂັດຂວາງຢູ່. 14ເຮົາເປັນໜີ້ພວກທີ່ສີວິໄລແລະພວກ
ຕ່ຳຊ້າ ເປັນໜີ້ທັງພວກນັກປາດແລະພວກຄົນໂງ່ດ້ວຍ. 15ເພາະເຫດນັ້ນ, ເຮົາຮີບຮ້ອນທີ່ຈະ

[ກ]ພາສາເດີມວ່າ "ຂ້າໃຊ້" [ຂ]ພາສາເດີມອາດແປໄດ້ວ່າ "ຕາມພຣະວິນຍານບໍລິສຸດກໍ..."

ປະກາດຂ່າວປະເສີດແກ່ເຈົ້າທັງຫລາຍທີ່ຢູ່ໃນ ກຸງໂຣມ ເໝືອນກັນ.

## ລິດເດດຂອງຂ່າວປະເສີດ

[16]ເພາະວ່າເຮົາບໍ່ມີຄວາມລະອາຍໃນຂ່າວປະເສີດ ດ້ວຍວ່າຂ່າວປະເສີດນັ້ນເປັນລິດເດດຂອງ
ພຣະເຈົ້າ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມພົ້ນ, ພວກຢິວກ່ອນແລະພວກຕ່າງຊາດດ້ວຍ.
[17]ເພາະໃນຂ່າວປະເສີດນັ້ນ ພຣະເຈົ້າ ໄດ້ຊົງສະແດງໃຫ້ມີຄວາມຊອບທຳດ້ວຍອາໃສຄວາມເຊື່ອ
ແຕ່ສິ່ງດຽວ ເໝືອນມີຄຳຂຽນໄວ້ໃນພຣະຄຳພີແລ້ວວ່າ, "ຜູ້ທີ່ຖືວ່າເປັນຄົນຊອບທຳເພາະດ້ວຍ
ຄວາມເຊື່ອ ຜູ້ນັ້ນແຫລະ, ຈະໄດ້ຊີວິດ."[ກ]

## ໂທດຂອງມະນຸດຊາດ

[18]ດ້ວຍວ່າພຣະພິໂລດຂອງ ພຣະເຈົ້າ ກໍປະກົດມາຈາກສະຫວັນ ຕໍ່ສູ້ບັນດາຄວາມໝິ່ນປະ-
ໝາດພຣະອົງ ແລະຄວາມຊົ່ວຮ້າຍທຸກຢ່າງຂອງມະນຸດ ຄືມະນຸດພວກນັ້ນທີ່ເອົາຄວາມຊົ່ວຮ້າຍ
ມາຂັດຂວາງຄວາມຈິງ. [19]ເຫດວ່າທີ່ຈະຮູ້ຈັກ ພຣະເຈົ້າ ໄດ້ເທົ່າໃດນັ້ນກໍໄດ້ປະກົດແຈ້ງຄັກໃນໃຈ
ເຂົາ ດ້ວຍວ່າ ພຣະເຈົ້າ ໄດ້ຊົງໂຜດສະແດງໃຫ້ເຂົາຮູ້ແລ້ວ. [20]ຕັ້ງແຕ່ແຮກສ້າງໂລກມາສະພາບ
ທີ່ບໍ່ປະກົດຂອງ ພຣະເຈົ້າ ຄືລິດທານຸພາບອັນຖາວອນແລະຄວາມເປັນພຣະຂອງພຣະອົງ ກໍໄດ້
ປະກົດ ແຈ້ງ ໃນ ສັບພະ ສິ່ງ ທີ່ ພຣະອົງ ໄດ້ ຊົງ ສ້າງ ສັນນັ້ນ ເຂົາ ທັງຫລາຍ ຈິ່ງ ບໍ່ ມີ ຂໍ້ ແກ້ ຕົວ ໄດ້.
[21]ເພາະເຖິງແມ່ນວ່າເຂົາທັງຫລາຍໄດ້ຮູ້ຈັກ ພຣະເຈົ້າ ແລ້ວ ເຂົາກໍບໍ່ໄດ້ຖວາຍພຣະກຽດແກ່ພຣະ-
ອົງໃຫ້ສົມກັບການຊົງເປັນ ພຣະເຈົ້າ ທັງບໍ່ໄດ້ໂມທະນາພຣະຄຸນ ແຕ່ວ່າຄວາມຄຶດຂອງເຂົາ
ກາຍເປັນສິ່ງທີ່ເສຍປະໂຫຍດ ແລະໃຈໂງ່ຂອງເຂົາກໍມືດມົວໄປ. [22]ເຂົາອ້າງຕົວວ່າເປັນຄົນສະ-
ຫລາດ ເຂົາຈິ່ງກາຍເປັນຄົນໂງ່ໄປ. [23]ເຂົາໄດ້ເອົາຮູບມະນຸດຜູ້ຕາຍເປັນກັບຮູບນົກຮູບສັດສີ່ຕີນ
ແລະສັດເລືອຄານມາປ່ຽນແທນສະຫງ່າລາສີຂອງ ພຣະເຈົ້າ ຜູ້ຊົງຕາຍບໍ່ເປັນ.

[24]ເພາະສັນນັ້ນ, ພຣະເຈົ້າ ຈິ່ງຊົງປ່ອຍເຂົາໃຫ້ເຮັດການຊົ່ວຊ້າ ຕາມລາຄະຕັນຫາໃນໃຈຂອງ
ເຂົາ ເຂົາຈິ່ງເຮັດສິ່ງໜ້າອັບອາຍທາງຮ່າງກາຍຕໍ່ກັນ. [25]ເຂົາໄດ້ເອົາຄວາມຈິງເລື່ອງ ພຣະເຈົ້າ
ມາປ່ຽນເປັນເລື່ອງບໍ່ຈິງ ແລະໄດ້ນະມັດສະການທັງບົວລະບັດສິ່ງທີ່ຊົງສ້າງໄວ້ນັ້ນແທນພຣະອົງ
ຜູ້ຊົງສ້າງ ຄືຜູ້ທີ່ສົມຄວນໄດ້ຮັບຄວາມສັນລະເສີນເປັນນິດ ອາແມນ.

[26]ເພາະເຫດນັ້ນ, ພຣະເຈົ້າ ຈິ່ງຊົງປ່ອຍເຂົາໃຫ້ມີລາຄະຕັນຫາອັນໜ້າອັບອາຍ ພວກຜູ້ຍິງ
ຂອງເຂົາກໍປ່ຽນການສຳພັນຕາມທຳມະຊາດໃຫ້ຜິດທຳມະຊາດໄປ. [27]ຝ່າຍຜູ້ຊາຍກໍເໝືອນກັນ
ໄດ້ເລີກການສຳພັນກັບຜູ້ຍິງທຳມະຊາດ ແລະຮີບຮ້ອນດ້ວຍໄຟແຫ່ງລາຄະຕັນຫາທີມີຕໍ່ກັນ ຜູ້
ຊາຍກັບຜູ້ຊາຍພາກັນເຮັດການຊົ່ວໜ້າອັບອາຍຕໍ່ກັນ ເຂົາຈິ່ງໄດ້ຮັບຜົນກຳອັນສົມຄວນກັບ
ຄວາມຜິດຂອງເຂົາໃນຕົວເຂົາເອງ.

[28]ເຂົາບໍ່ເຫັນດີທີ່ຈະຮັບຮູ້ພຣະເຈົ້າ ພຣະອົງຈິ່ງຊົງປ່ອຍໃຫ້ເຂົາມີໃຈຊົ່ວແລະເຮັດສິ່ງທີ່ບໍ່ສົມ-
ຄວນ. [29]ພວກເຂົາເຕັມໄປດ້ວຍການອະທຳທຸກຢ່າງ, ການຊົ່ວຮ້າຍ, ຄວາມໂລບ, ຄວາມປອງ
ຮ້າຍ, ເຕັມໄປດ້ວຍຄວາມເຫິງສາ, ການຂ້າຟັນ, ການວິວາດ, ການລໍ້ລວງ, ການຜູກພະຍາ-
ບາດ, ການສັບສໍ່, [30]ການເວົ້ານິນທາ, ການກຽດຊັງ ພຣະເຈົ້າ, ຂີ້ອົ່ງໝິ່ນປະໝາດ, ຈອງຫອງ,

[ກ]ຫລືວ່າ "ຄົນຊອບທຳຈະໄດ້ຊີວິດໂດຍທາງຄວາມເຊື່ອ."

ອວດຕົວ, ປະດິດຄິດແຕ່ງການຊົ່ວຂຶ້ນ, ບໍ່ຟັງຄວາມພໍ່ແມ່, 31ໃຈບໍ່ສັງເກດການດີແລະຊົ່ວ, ບໍ່ຖື
ຄຳໝັ້ນສັນຍາ, ຂາດຄວາມຮັກທຳມະດາ, ບໍ່ມີຄວາມເມດຕາເອັນດູ. 32ເຖິງແມ່ນວ່າເຂົາຮູ້ຈັກຂໍ້
ບັນຍັດຂອງ ພຣະເຈົ້າ ຄັກ ທີ່ກ່າວວ່າຄົນທັງປວງທີ່ເຮັດຢ່າງນັ້ນກໍສົມຄວນຈະຕາຍ ເຖິງປານນັ້ນ
ເຂົາກໍຍັງເຮັດຢູ່ ແລະທັງເຫັນພ້ອມກັບຄົນທີ່ເຮັດຢ່າງນັ້ນດ້ວຍ.

# ບົດທີ 2

## ການຊົງພິພາກສາອັນຍຸດຕິທຳ

1ເຫດສັນນັ້ນມະນຸດເອີຍ, ບໍ່ວ່າເຈົ້າຈະແມ່ນໃຜ ເມື່ອເຈົ້າກ່າວໂທດໃສ່ຄົນອື່ນເຈົ້າບໍ່ມີຂໍ້ທີ່ຈະ
ແກ້ຕົວໄດ້ ເພາະໃນເມື່ອເຈົ້າກ່າວໂທດໃສ່ຜູ້ອື່ນນັ້ນ ເຈົ້າກໍກ່າວໂທດໃສ່ຕົວເອງ ເພາະວ່າເຈົ້າທີ່
ກ່າວໂທດໃສ່ເຂົາກໍຍັງເຮັດຢູ່ຢ່າງດຽວກັນກັບເຂົາ. 2ເຮົາທັງຫລາຍຮູ້ຢູ່ວ່າ ການທີ່ ພຣະເຈົ້າ ຊົງ
ພິພາກສາລົງໂທດຄົນທັງຫລາຍທີ່ເຮັດການຢ່າງນັ້ນ ກໍຖືກຕ້ອງຢູ່ແລ້ວ. 3ແຕ່ມະນຸດເອີຍ, ເຈົ້າຜູ້
ກ່າວໂທດຄົນທີ່ເຮັດຢ່າງນັ້ນ ແຕ່ເຈົ້າເອງຍັງເຮັດຢ່າງດຽວກັນກັບເຂົາ ເຈົ້າຄຶດຫລືວ່າຈະພົ້ນ
ຈາກການຊົງພິພາກສາລົງໂທດຂອງ ພຣະເຈົ້າ ໄດ້. 4ຫລືວ່າເຈົ້າປະໝາດພຣະກະລຸນາຄຸນອັນ
ສົມບູນແລະຄວາມອົດກັ້ນພຣະໄທກັບຄວາມອົດທົນຂອງພຣະອົງ ເຈົ້າບໍ່ຮູ້ຫລືວ່າພຣະກະລຸນາ
ຄຸນຂອງ ພຣະເຈົ້າ ນັ້ນ ຊົງປະສົງຈະນຳເຈົ້າໃຫ້ກັບໃຈເສຍໃໝ່. 5ແຕ່ໃຈຂອງເຈົ້າແຂງກະດ້າງ
ແລະບໍ່ຍອມກັບຕົວ ເຈົ້າຈຶ່ງກຳລັງສ້າງສົມພຣະພິໂລດໄວ້ໃຫ້ຕົວເອງໃນວັນຂອງຄວາມຮ້າຍຂາດ
ນັ້ນ ຄືວັນທີ່ ພຣະເຈົ້າ ຈະຊົງພິພາກສາລົງໂທດຢ່າງຍຸດຕິທຳໃຫ້ປະກົດແຈ້ງນັ້ນ. 6ເພາະພຣະອົງ
ຈະຊົງປະທານຕອບແທນຕາມການເຮັດຂອງເຂົາທຸກຄົນ. 7ສຳລັບຄົນທີ່ມີຄວາມພຽນພະຍາຍາມ
ເຮັດການດີ, ສະແຫວງຫາສະຫງ່າລາສີ, ຍົດສັກ, ແລະຄວາມບໍ່ຮູ້ຕາຍນັ້ນ ພຣະອົງຈະຊົງປະ-
ທານຊີວິດອັນຕະຫລອດໄປເປັນນິດໃຫ້ແກ່ເຂົາ. 8ແຕ່ພຣະອົງຈະຊົງສະແດງພຣະພິໂລດອັນ
ເຜັດຮ້ອນແກ່ຄົນທັງຫລາຍທີ່ຄຶດໃຫຍ່ໄຝ່ສູງ ແລະແກ່ຜູ້ທີ່ບໍ່ເຊື່ອຟັງຄວາມຈິງແຕ່ຍອມເຮັດຕາມ
ຄວາມຊົ່ວ. 9ຄວາມທຸກຂະເວດທະນາຈະເກີດມີແກ່ມະນຸດທຸກຄົນທີ່ເຮັດການຊົ່ວ ຄືເກີດແກ່ຊາດ
ຢິວກ່ອນ ແລະແກ່ຄົນຕ່າງຊາດດ້ວຍ. 10ແຕ່ສະຫງ່າລາສີແລະຍົດສັກກັບຄວາມສຸກສຳລານຈະ
ເກີດມີແກ່ທຸກຄົນທີ່ເຮັດການດີ ຄືແກ່ຊາດຢິວກ່ອນແລະແກ່ຄົນຕ່າງຊາດດ້ວຍ. 11ເພາະວ່າ
ພຣະເຈົ້າ ບໍ່ຊົງເຫັນແກ່ໜ້າຜູ້ໃດເລີຍ. 12ຄົນທັງຫລາຍທີ່ບໍ່ມີພຣະບັນຍັດແລະເຮັດຜິດບາບ ຈະ
ຕ້ອງຈິບຫາຍໄປໂດຍບໍ່ອ້າງພຣະບັນຍັດ ແຕ່ຄົນທັງຫລາຍທີ່ມີພຣະບັນຍັດແລະເຮັດຜິດບາບ ກໍ
ຈະຕ້ອງຖືກໂທດຕາມພຣະບັນຍັດນັ້ນ. 13ດ້ວຍວ່າບໍ່ແມ່ນພວກຄົນທີ່ຟັງພຣະບັນຍັດຈະເປັນຜູ້
ຊອບທຳຕໍ່ພຣະພັກ ພຣະເຈົ້າ ແຕ່ແມ່ນຜູ້ທີ່ຂັບຕາມພຣະບັນຍັດເທົ່ານັ້ນທີ່ຈະໄດ້ຖືວ່າຊອບທຳ.
14ເມື່ອພວກຕ່າງຊາດຜູ້ບໍ່ມີພຣະບັນຍັດຫາກໄດ້ປະຕິບັດຕາມພຣະບັນຍັດໄປ ໂດຍນິໄສປົກກະຕິ
ຄົນເຫລົ່ານັ້ນ ເຖິງແມ່ນເຂົາບໍ່ມີພຣະບັນຍັດ ແຕ່ກໍຍັງເປັນພຣະບັນຍັດໃນຕົວເຂົາເອງ. 15ເຂົາ
ສະແດງໃຫ້ເຫັນວ່າຫລັກການປະຕິບັດຕາມພຣະບັນຍັດນັ້ນ ກໍຈາລຶກໄວ້ໃນໃຈຂອງເຂົາແລ້ວ
ແລະໃຈສຳນຶກຜິດແລະຊອບຂອງເຂົາກໍເປັນພະຍານເໝືອນກັນ ແມ່ນຄວາມຄຶດຂອງເຂົານັ້ນ
ແຫລະ, ທີ່ກ່າວໂທດຕົວເຂົາ ຫລືອາດຈະແກ້ຕົວໃຫ້ເຂົາ. 16ໃນວັນທີ່ ພຣະເຈົ້າ ຈະຊົງໃຫ້ພຣະ-

ເຢຊູຄຣິດ ພິພາກສາຄວາມເລິກລັບຂອງມະນຸດທັງຫລາຍຕາມຂ່າວປະເສີດທີ່ເຮົາໄດ້ປະກາດ
ແລ້ວນັ້ນ.

## ພວກຢິວ ແລະ ພຣະບັນຍັດ

17ແຕ່ຖ້າເຈົ້າໄດ້ຊື່ວ່າເປັນຊາດຢິວ ຈຶ່ງເພິ່ງພາອາໃສພຣະບັນຍັດ, ແລະອວດວ່າມີພຣະເຈົ້າ.
18ແລະຮູ້ຈັກນ້ຳພຣະໄທຂອງພຣະອົງ, ທັງເຫັນຊອບໃນສິ່ງປະເສີດເພາະເຈົ້າໄດ້ຮຽນຮູ້ໃນພຣະ-
ບັນຍັດ. 19ແລະຖ້າເຈົ້າຖືໝັ້ນວ່າຕົວເປັນຜູ້ນຳຄົນຕາບອດ, ເປັນແສງສະຫວ່າງແກ່ຄົນທັງຫລາຍ
ທີ່ຢູ່ໃນຄວາມມືດ. 20ເປັນຜູ້ອົບຮົມຄົນໂງ່, ເປັນຄູສອນເດັກນ້ອຍ, ເປັນຜູ້ມີແບບແຜນອັນສົມບູນ
ຂອງຄວາມຮູ້ແລະຄວາມຈິງໃນພຣະບັນຍັດ. 21ສັນນັ້ນເຈົ້າຊຶ່ງເປັນຜູ້ສອນຄົນອື່ນຈະບໍ່ສອນຕົວ
ເອງຫລືເຈົ້າຜູ້ປະກາດວ່າ, "ຢ່າລັກຊັບ" ເຈົ້າເອງລັກຢູ່ຫລືບໍ່. 22ເຈົ້າຜູ້ທີ່ໄດ້ບອກວ່າ "ຢ່າຫລິ້ນ
ຊູ້" ເຈົ້າເອງຍັງຫລິ້ນຢູ່ຫລືບໍ່ ເຈົ້າຜູ້ກຽດຊັງພຣະທຽມ ຕົວເຈົ້າຍັງລັກປຸ້ນວິຫານຫລືບໍ່. 23ເຈົ້າຜູ້
ອວດອ້າງໃນພຣະບັນຍັດ ຕົວເຈົ້າຍັງຫລູ່ກຽດແກ່ພຣະເຈົ້າ ໂດຍເຮັດຜິດຕໍ່ພຣະບັນຍັດຫລືບໍ່.
24ເພາະພຣະຄຳພີຂຽນໄວ້ວ່າ "ພຣະນາມຂອງພຣະເຈົ້າຖືກໝິ່ນປະໝາດໃນຖ້າມກາງຄົນຕ່າງ
ຊາດກໍເພາະເຈົ້າທັງຫລາຍ."

25ຖ້າເຈົ້າເຮັດຕາມພຣະບັນຍັດ ພິທີຕັດນັ້ນເປັນປະໂຫຍດແທ້ ແຕ່ຖ້າເຈົ້າລ່ວງລະເມີດພຣະ-
ບັນຍັດ ການທີ່ເຈົ້າຮັບພິທີຕັດນັ້ນກໍເໝືອນບໍ່ໄດ້ຮັບ. 26ສັນນັ້ນຖ້າຜູ້ໃດທີ່ບໍ່ໄດ້ຮັບພິທີຕັດ ແຕ່ຍັງ
ຖືຮັກສາພຣະບັນຍັດຢູ່ ການທີ່ຜູ້ນັ້ນບໍ່ໄດ້ຮັບພິທີຕັດຈະໄດ້ຊົງຖືເໝືອນກັບວ່າ ຜູ້ນັ້ນໄດ້ຮັບພິທີ
ຕັດແລ້ວບໍ່ແມ່ນຫລື. 27ເຖິງແມ່ນວ່າເຈົ້າທັງຫລາຍມີພຣະບັນຍັດທີ່ຈາລຶກໄວ້ ແລະໄດ້ຮັບພິທີຕັດ
ແລ້ວ ກໍຍັງລ່ວງລະເມີດຕໍ່ພຣະບັນຍັດນັ້ນ ຝ່າຍຄົນທຳມະດາສາມັນທີ່ບໍ່ໄດ້ຮັບພິທີຕັດ ເຂົາກໍຍັງ
ຖືຮັກສາພຣະບັນຍັດຢູ່ ເຂົາພວກນັ້ນແຫລະ, ຈະກ່າວໂທດໃສ່ເຈົ້າ. 28ເພາະວ່າຄົນຢິວແທ້ບໍ່
ແມ່ນຄົນທີ່ເປັນຢິວແຕ່ພາຍນອກເທົ່ານັ້ນ ແລະການຮັບພິທີຕັດກໍບໍ່ແມ່ນອັນທີ່ປະກົດໃນເນື້ອ
ກາຍເທົ່ານັ້ນ. 29ແຕ່ວ່າຄົນທີ່ເປັນຊາດຢິວແທ້ ຄືຄົນທີ່ເປັນຊາດຢິວພາຍໃນ ແລະການຮັບພິທີ
ຕັດແທ້ນັ້ນ ຄືການຮັບທາງຈິດໃຈຊຶ່ງເປັນໄປຕາມພຣະວິນຍານ ບໍ່ແມ່ນເປັນໄປຕາມບົດບັນຍັດ
ຄົນຢ່າງນັ້ນພຣະເຈົ້າຊົງສັນລະເສີນ[ກ] ບໍ່ແມ່ນມະນຸດສັນລະເສີນ.

# ບົດທີ 3

1ຖ້າຢ່າງນັ້ນຄົນຢິວຈະໄດ້ປຽບກວ່າຄົນອື່ນຢ່າງໃດ ຫລືການຮັບພິທີຕັດຈະມີປະໂຫຍດອັນ
ໃດ. 2ກໍມີປະໂຫຍດຫລາຍໃນທຸກສິ່ງ ເປັນຕົ້ນວ່າ ພຣະເຈົ້າໄດ້ຊົງມອບພຣະທຳໂອວາດໃຫ້
ພວກຢິວຮັກສາ. 3ເຖິງແມ່ນມີບາງຄົນບໍ່ສັດຊື່ ຄວາມບໍ່ສັດຊື່ຂອງເຂົານັ້ນຈະເຮັດໃຫ້ຄວາມສັດຊື່
ຂອງພຣະເຈົ້າເສຍປະໂຫຍດຫລື. 4ບໍ່ແມ່ນຢ່າງນັ້ນດອກ ເຖິງແມ່ນວ່າທຸກຄົນເປັນຄົນຕົວະກໍ
ຕາມ ຂໍໃຫ້ພຣະເຈົ້າສັດຊື່ທ່ຽງທຳ ຕາມຂຽນໄວ້ໃນພຣະຄຳພີວ່າ, "ເພື່ອພຣະອົງຈະໄດ້ປະກົດ
ວ່າຊົງເປັນຜູ້ທ່ຽງທຳໃນຖ້ອຍຄຳທັງຫລາຍຂອງພຣະອົງ ແລະຊົງມີໄຊເມື່ອເຂົາກ່າວໂທດໃສ່

[ກ]ຄຳວ່າສັນລະເສີນກໍອ້າງເຖິງທ່ານຢູດາປູ່ຂອງຊາດຢິວ ໃນພາສາເຮັບເຣີນັ້ນ ຢູດາ ແປວ່າ ຜູ້ສົມກັບ
ຄວາມສັນລະເສີນ.

ພຣະອົງ.”
[5]ແຕ່ຖ້າວ່າຄວາມອະທຳຂອງພວກເຮົາ ເປັນເຫດໃຫ້ເຫັນຄວາມຍຸດຕິທຳຂອງ ພຣະເຈົ້າ ແລ້ວ
ພວກເຮົາຈະວ່າຢ່າງໃດ ຈະວ່າ ພຣະເຈົ້າ ລົງໂທດໂດຍບໍ່ຍຸດຕິທຳຢ່າງນັ້ນຫລື (ເຮົາເວົ້າຢ່າງມະ-
ນຸດ). [6]ບໍ່ແມ່ນຢ່າງນັ້ນດອກ ຖ້າແມ່ນຢ້າງນັ້ນແລ້ວ ພຣະເຈົ້າ ຈະຊົງພິພາກສາໂລກໄດ້ຢ່າງໃດ.
[7]ແຕ່ຖ້າວ່າຄວາມຕົວະລ່າຍຂອງ ເຮົາ ເປັນ ເຫດ ໃຫ້ຄວາມທ່ຽງທຳຂອງ ພຣະເຈົ້າ ໄດ້ປະກົດ ແຈ້ງ
ຄັກ ແລະເປັນທີ່ໃຫ້ເກີດກຽດຕິຍົດແກ່ພຣະອົງ ເປັນຫຍັງເຮົາຈິ່ງຍັງຖືກຊົງລົງໂທດເໝືອນເປັນ
ຄົນຜິດບາບ. [8]ແລະເປັນຫຍັງເຮົາຈິ່ງບໍ່ເຮັດຊົ່ວເພື່ອຄວາມດີຈະເກີດຂຶ້ນຈາກຄວາມຊົ່ວນັ້ນ ຕາມ
ທີ່ບາງຄົນເລົ່າລືແລະນິນທາຫາວ່າເຮົາໄດ້ກ່າວຢ່າງນັ້ນແລ້ວ ການລົງໂທດຄົນຢ່າງນັ້ນກໍຍຸດຕິ
ທຳແລ້ວ.

## ບໍ່ມີຄົນຊອບທຳ

[9]ຖ້າດັ່ງນັ້ນແລ້ວຈະເປັນຢ່າງໃດ ເຮົາຄົນ ຢິວ ຈະໄດ້ປຽບກວ່າຫລືບໍ່[ກ] ບໍ່ແມ່ນຢ່າງນັ້ນດອກ
ດ້ວຍວ່າເຮົາໄດ້ຟ້ອງແລ້ວວ່າ ທັງຄົນ ຢິວ ແລະຄົນຕ່າງຊາດກໍຢູ່ໃຕ້ອຳນາດຂອງຄວາມຜິດບາບ
ທຸກຄົນ. [10]ດັ່ງມີຄຳຊຽນໄວ້ໃນພຣະຄຳພີວ່າ,

"ບໍ່ມີຄົນຊອບທຳຈັກຄົນໜຶ່ງຄົນດຽວ
[11] ບໍ່ມີຄົນທີ່ເຂົ້າໃຈ ບໍ່ມີຄົນທີ່ສະແຫວງຫາ ພຣະເຈົ້າ
[12] ທຸກຄົນໄດ້ຫລົງເຫັ້ນໄປ ເຂົາພາກັນເປັນຄົນຊົ່ວໄປໝົດ
ຜູ້ເຮັດການດີບໍ່ມີຈັກຄົນດຽວ
[13] ລຳຄໍຂອງເຂົາຄືຂຸມຝັງຊາກສົບທີ່ໄຂຢູ່
ເຂົາໃຊ້ລີ້ນຂອງເຂົາໃນການລໍ້ລວງ
ມີພິດງູຮ້າຍຢູ່ໃຕ້ຮີມປາກຂອງເຂົາ
[14] ປາກຂອງເຂົາເຕັມໄປດ້ວຍຄຳປ້ອຍດ່າແລະຄຳຂົມຂື່ນ
[15] ຕີນຂອງເຂົາວ່ອງໄວໃນການເຮັດໃຫ້ນອງເລືອດ
[16] ເຂົາຍ່ອມຖິ້ມຄວາມເສຍຫາຍແລະຄວາມທຸກໄວ້ໃນທາງທີ່ເຂົາເດີນໄປ
[17] ແລະເຂົາບໍ່ຮູ້ຈັກຫົນທາງແຫ່ງຄວາມສະຫງົບສຸກ
[18] ເຂົາບໍ່ເຄີຍຄິດທີ່ຈະຢຳເກງ ພຣະເຈົ້າ.”

[19]ແຕ່ເຮົາທັງຫລາຍຮູ້ຢູ່ວ່າພຣະບັນຍັດທຸກຂໍ້ທີ່ໄດ້ກ່າວນັ້ນ ກໍກ່າວ ແກ່ຄົນ ເຫລົ່ານັ້ນທີ່ຢູ່ໃຕ້
ພຣະບັນຍັດ ເພື່ອອັດປາກທຸກຄົນ ແລະ ເພື່ອໃຫ້ມະນຸດທຸກຄົນໃນໂລກຢູ່ໃຕ້ການພິພາກສາຂອງ
ພຣະເຈົ້າ. [20]ເພາະວ່າໃນສາຍພຣະເນດຂອງ ພຣະເຈົ້າ ບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນຜູ້ຊອບ
ທຳດ້ວຍການເຮັດຕາມພຣະບັນຍັດ ເພາະວ່າພຣະບັນຍັດໄດ້ເຮັດໃຫ້ສັງເກດຮູ້ຈັກຄວາມບາບ.

## ຄວາມຊອບທຳໂດຍທາງຄວາມເຊື່ອ

[21]ແຕ່ບັດນີ້ຄວາມຊອບທຳຊຶ່ງມາຈາກ ພຣະເຈົ້າ ໄດ້ປະກົດນອກຈາກພຣະບັນຍັດ (ມີພຣະ-
ບັນຍັດແລະຜູ້ປະກາດພຣະທຳເປັນພະຍານຢູ່). [22]ຄືຄວາມຊອບທຳທີ່ມາຈາກ ພຣະເຈົ້າ ຊຶ່ງຊົງ

[ກ]ປະໂຫຍກນີ້ອາດແປວ່າ (1) “ເຂົາຈະໄດ້ປຽບກວ່າຫລື” (2) “ເຮົາກຳລັງສະເໜີຄວາມແກ້ຕົວບໍ່.”

ປະທານແກ່ຜູ້ທີ່ເຊື່ອທຸກຄົນ ດ້ວຍອາໃສຄວາມເຊື່ອໃນພຣະເຢຊູຄຣິດ ເພາະວ່າຄົນທັງຫລາຍ
ສະເໝີກັນທຸກຄົນ. [23]ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະລັດສະໝີຂອງພຣະ-
ເຈົ້າ. [24]ແຕ່ພຣະເຈົ້າຊົງຖືວ່າເຂົາເປັນຄົນຊອບທຳ ດ້ວຍພຣະກະລຸນາຄຸນຂອງພຣະອົງທີ່ບໍ່ຄິດ
ວ່າ ຄືດ້ວຍການຊົງໄຖ່ໄວ້ຊຶ່ງມີຢູ່ໃນພຣະເຢຊູຄຣິດ. [25]ທີ່ພຣະເຈົ້າໄດ້ຊົງໃຫ້ປະກົດ ເພື່ອໃຫ້
ເປັນຜູ້ໄຖ່ໂທດແທນບາບໂດຍຄວາມເຊື່ອໃນພຣະໂລຫິດຂອງພຣະອົງ ອັນນີ້ກໍເພື່ອສະແດງໃຫ້
ເຫັນຄວາມຍຸດຕິທຳຂອງພຣະເຈົ້າ ໃນການທີ່ພຣະອົງໄດ້ຊົງອົດກັ້ນພຣະໄທໄວ້ ແລະບໍ່ໄດ້ຊົງ
ລົງໂທດມະນຸດທີ່ໄດ້ເຮັດຜິດບາບໄປແລ້ວນັ້ນ. [26]ແລະເພື່ອຈະຊົງສະແດງໃນປັດຈຸບັນວ່າພຣະ-
ອົງຊົງເປັນຜູ້ຍຸດຕິທຳ ແລະຊົງໂຜດຜູ້ທີ່ເຊື່ອໃນພຣະເຢຊູເປັນຜູ້ຊອບທຳດ້ວຍ.

[27]ເມື່ອເປັນຢ່າງນັ້ນແລ້ວເຮົາຈະເອົາອັນໃດມາອວດ ກໍໝົດຫົນທາງ ຈະອ້າງຫລັກອັນໃດວ່າ
ໝົດຫົນທາງ ຈະອ້າງຫລັກການປະຕິບັດຕາມພຣະບັນຍັດຫລື ບໍ່ແມ່ນດອກ ແຕ່ຕ້ອງອ້າງເອົາ
ຫລັກຂອງຄວາມເຊື່ອ. [28]ດ້ວຍວ່າພວກເຮົາເຫັນວ່າຄົນໜຶ່ງຄົນໃດຈະຊົງຖືວ່າຊອບທຳໄດ້ ກໍ
ໂດຍອາໃສຄວາມເຊື່ອນອກຈາກການປະຕິບັດຕາມພຣະບັນຍັດ. [29]ຫລືວ່າພຣະເຈົ້ານັ້ນຊົງເປັນ
ພຣະເຈົ້າຂອງຊາດຢິວຊາດດຽວເທົ່ານັ້ນຫລື ພຣະອົງບໍ່ຊົງເປັນພຣະເຈົ້າຂອງຄົນຕ່າງຊາດ
ດ້ວຍຫລື ແມ່ນແລ້ວ ພຣະອົງຊົງເປັນພຣະເຈົ້າຂອງຄົນຕ່າງຊາດດ້ວຍ. [30]ເຫດວ່າພຣະອົງຊົງ
ເປັນພຣະເຈົ້າແຕ່ອົງດຽວ ແລະພຣະອົງຊົງໂຜດຖືວ່າຄົນທີ່ຮັບພິທີຕັດນັ້ນເປັນຄົນຊອບທຳດ້ວຍ
ຄວາມເຊື່ອ ແລະຈະຊົງໂຜດຖືວ່າຄົນທີ່ບໍ່ໄດ້ຮັບພິທີຕັດນັ້ນເປັນຄົນຊອບທຳ ດ້ວຍຄວາມເຊື່ອ
ເໝືອນກັນ. [31]ຖ້າຢ່າງນັ້ນພວກເຮົາຈະລົບລ້າງພຣະບັນຍັດດ້ວຍຄວາມເຊື່ອຫລື ບໍ່ແມ່ນຢ່າງນັ້ນ
ດອກ ແຕ່ພວກເຮົາຍັງເປັນຜູ້ສະໜັບສະໜູນພຣະບັນຍັດອີກ.

# ບົດທີ 4

## ອັບຣາຮາມເປັນແບບຢ່າງ

[1]ຖ້າຢ່າງນັ້ນພວກເຮົາຈະວ່າຢ່າງໃດເຖິງເລື່ອງອັບຣາຮາມບັນພະບຸລຸດຂອງພວກເຮົາຕາມ
ສາຍເລືອດ. [2]ຖ້າພຣະເຈົ້າຊົງຖືວ່າອັບຣາຮາມເປັນຄົນຊອບທຳດ້ວຍການປະຕິບັດ ທ່ານກໍມີ
ທາງທີ່ຈະອວດໄດ້ ແຕ່ຕໍ່ພຣະພັກພຣະເຈົ້າທ່ານບໍ່ມີທາງຢ່າງນັ້ນ. [3]ພຣະຄຳພີໄດ້ກ່າວໄວ້ຢ່າງ-
ໃດ ກໍກ່າວວ່າ, "ອັບຣາຮາມໄດ້ເຊື່ອພຣະເຈົ້າ ແລະຄວາມເຊື່ອນັ້ນພຣະເຈົ້າຊົງຖືວ່າເປັນ-
ຄວາມຊອບທຳແກ່ທ່ານ." [4]ຝ່າຍຄົນທີ່ເຮັດການກໍບໍ່ຖືວ່າຄ່າຈ້າງທີ່ຕົນໄດ້ຮັບນັ້ນເປັນບຳເໜັດ
ແຕ່ຖືວ່າເປັນຄ່າແຮງງານທີ່ຕົນເຮັດ. [5]ສ່ວນຄົນທີ່ບໍ່ອາໃສການປະຕິບັດ ແຕ່ໄດ້ວາງໃຈໃນພຣະ-
ອົງຜູ້ຊົງໂຜດຄົນຜິດໃຫ້ເປັນຄົນຊອບທຳ ຄວາມເຊື່ອຂອງຄົນນັ້ນກໍຖືວ່າເປັນຄວາມຊອບທຳ.

[6]ດັ່ງ ດາວິດ ໄດ້ກ່າວ ເຖິງ ຄວາມສຸກ ຂອງ ຄົນ ທີ່ ພຣະເຈົ້າ ໄດ້ ຊົງ ໂຜດ ຖືວ່າ ເປັນ ຄົນ ຊອບ ທຳ
ໂດຍບໍ່ໄດ້ອາໃສການປະຕິບັດ,

[7] ວ່າ, "ຜູ້ຊຶ່ງໄດ້ຮັບຄວາມອະໄພແກ່ການລ່ວງລະເມີດຂອງຕົນ
ແລະການຜິດບາບຂອງຕົນໄດ້ຊົງປົກບັງໄວ້ແລ້ວ
ຜູ້ນັ້ນແຫລະ, ເປັນສຸກ.

8 ບຸກຄົນທີ່ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງຖືໂທດ ກໍເປັນສຸກ."

9ຖ້າເປັນດັ່ງນັ້ນ, ຄວາມສຸກມີແກ່ຄົນທີ່ໄດ້ຮັບພິທີຕັດແຕ່ພວກດຽວຫລື ຫລືວ່າມີແກ່ຄົນທີ່ບໍ່ໄດ້
ຮັບພິທີຕັດດ້ວຍ ເພາະເຮົາກ່າວວ່າ, "ອັບຣາຮາມໄດ້ເຊື່ອພຣະເຈົ້າ ແລະເພາະຄວາມເຊື່ອນັ້ນ
ພຣະເຈົ້າຈຶ່ງຊົງຖືວ່າທ່ານເປັນຄົນຊອບທຳ." 10ແຕ່ພຣະເຈົ້າຊົງຖືເມື່ອໃດ ເມື່ອທ່ານຮັບພິທີຕັດ
ແລ້ວຫລື ຫລືວ່າເມື່ອຍັງບໍ່ທັນໄດ້ຮັບເທື່ອ ບໍ່ແມ່ນເມື່ອຮັບແລ້ວ ແຕ່ເມື່ອຍັງບໍ່ທັນໄດ້ຮັບພິທີຕັດ
ເທື່ອ. 11ແລະທ່ານໄດ້ຮັບພິທີຕັດນັ້ນເປັນເຄື່ອງໝາຍສຳຄັນ ຄືເປັນກາປະທັບຂອງຄວາມຊອບ
ທຳຊຶ່ງເກີດດ້ວຍຄວາມເຊື່ອທີ່ທ່ານໄດ້ມີຢູ່ ເມື່ອທ່ານຍັງບໍ່ທັນໄດ້ຮັບພິທີຕັດເທື່ອນັ້ນ ເພື່ອທ່ານ
ຈະໄດ້ເປັນບິດາຂອງຄົນທັງປວງທີ່ເຊື່ອ ຊຶ່ງພຣະເຈົ້າຊົງຖືວ່າເປັນຄົນຊອບທຳເຖິງແມ່ນວ່າຍັງບໍ່
ໄດ້ຮັບພິທີຕັດກໍຕາມ. 12ແລະເພື່ອທ່ານຈະເປັນບິດາຂອງຄົນທັງປວງທີ່ຮັບພິທີຕັດ ແລະບໍ່ພຽງ
ແຕ່ຮັບພິທີຕັດເທົ່ານັ້ນ ແຕ່ມີຄວາມເຊື່ອຕາມແບບຂອງອັບຣາຮາມບິດາຂອງເຮົາທັງຫລາຍ ຊຶ່ງ
ທ່ານມີຄວາມເຊື່ອເມື່ອຍັງບໍ່ທັນໄດ້ຮັບພິທີຕັດນັ້ນ.

## ໂດຍຄວາມເຊື່ອພຣະສັນຍາຈຶ່ງເກີດຜົນ

13ດ້ວຍວ່າພຣະສັນຍາທີ່ຊົງປະທານແກ່ອັບຣາຮາມ ແລະຜູ້ສືບເຊື້ອສາຍຂອງທ່ານທີ່ວ່າຈະໄດ້
ທັງພິພົບໂລກເປັນມໍລະດົກນັ້ນ ກໍບໍ່ໄດ້ມາທາງພຣະບັນຍັດ ແຕ່ໄດ້ມາທາງຄວາມຊອບທຳທີ່ເກີດ
ມາຈາກຄວາມເຊື່ອ. 14ຖ້າຄົນທີ່ຖືຕາມພຣະບັນຍັດນັ້ນຈະເປັນເຈົ້າຂອງມໍລະດົກ ແລ້ວຄວາມ
ເຊື່ອກໍບໍ່ມີປະໂຫຍດອັນໃດ ແລະພຣະສັນຍາກໍເສຍປະໂຫຍດເໝືອນກັນ. 15ເພາະວ່າພຣະບັນ-
ຍັດເປັນເຫດໃຫ້ມີການຊົງພຣະພິໂລດ ແຕ່ບ່ອນໃດບໍ່ມີພຣະບັນຍັດ ບ່ອນນັ້ນກໍບໍ່ມີການລ່ວງ
ລະເມີດພຣະບັນຍັດ. 16ເພາະເຫດນັ້ນແຫລະ, ການທີ່ໄດ້ຮັບມໍລະດົກຈຶ່ງຂຶ້ນຢູ່ກັບຄວາມເຊື່ອ
ເພື່ອຈະໄດ້ເປັນຕາມພຣະຄຸນ ເພື່ອພຣະສັນຍານັ້ນຈະເປັນທີ່ໄວ້ວາງໃຈແກ່ຜູ້ສືບເຊື້ອສາຍຂອງ
ທ່ານທຸກຄົນ ບໍ່ໃຊ່ແກ່ຜູ້ສືບເຊື້ອສາຍທີ່ຖືພຣະບັນຍັດພວກດຽວ ແຕ່ແກ່ບັນດາຄົນທີ່ມີຄວາມເຊື່ອ
ຢ່າງດຽວກັນກັບອັບຣາຮາມ ຜູ້ເປັນບິດາຂອງເຮົາທັງໝົດ. 17ຕາມທີ່ຂຽນໄວ້ໃນພຣະຄຳພີແລ້ວ
ວ່າ, "ເຮົາໄດ້ຕັ້ງໃຫ້ເຈົ້າເປັນບິດາຂອງມວນປະຊາຊາດ" ຕັ້ງໄວ້ຈຳເພາະພຣະພັກພຣະເຈົ້າທີ່
ທ່ານໄດ້ເຊື່ອນັ້ນ ຄືພຣະເຈົ້າຜູ້ຊົງບັນດານໃຫ້ຄົນທີ່ຕາຍແລ້ວມີຊີວິດຄືນມາ ແລະຊົງເອີ້ນສິ່ງ
ຂອງທີ່ບໍ່ມີໃຫ້ມີຂຶ້ນ. 18ຝ່າຍອັບຣາຮາມນັ້ນເມື່ອບໍ່ມີຫວັງທີ່ໜ້າໄວ້ວາງໃຈແລ້ວ ກໍຍັງເຊື່ອໄວ້
ວາງໃຈ ມີຄວາມຫວັງວ່າຈະເປັນ "ບິດາຂອງມວນປະຊາຊາດ" ຕາມຄຳທີ່ຊົງກ່າວໄວ້ແລ້ວວ່າ,
"ເຊື້ອສາຍຂອງເຈົ້າຈະເປັນຢ່າງນັ້ນແຫລະ." 19ຄວາມເຊື່ອຂອງທ່ານບໍ່ໄດ້ລົດນ້ອຍຖອຍລົງເລີຍ
ເຖິງແມ່ນວ່າອາຍຸສັງຂານຂອງຕົນໄດ້ປະມານຮ້ອຍປີແລ້ວກໍຕາມທ່ານກໍບໍ່ໄດ້ຄຶດວ່າຮ່າງກາຍ
ຂອງຕົນປຽບເໝືອນກັບຕາຍແລ້ວ ແລະບໍ່ໄດ້ຄຶດວ່າທ້ອງຂອງນາງຊາຣາເປັນໝັນ. 20ທ່ານບໍ່
ໄດ້ສົງໃສໃນພຣະສັນຍາຂອງພຣະເຈົ້າ ແຕ່ຄວາມເຊື່ອຂອງທ່ານໄດ້ເພີ່ມກຳລັງໃຫ້ແຂງແຮງຂຶ້ນ
ທ່ານຈຶ່ງໄດ້ຖວາຍກຽດຕິຍົດແກ່ພຣະເຈົ້າ. 21ທ່ານເຊື່ອໝັ້ນວ່າພຣະເຈົ້າຊົງລິດອຳນາດ ອາດ
ເຮັດໃຫ້ສຳເລັດໄດ້ຕາມທີ່ຊົງສັນຍາໄວ້ແລ້ວ. 22ດ້ວຍເຫດນີ້ແຫລະ, ຄວາມເຊື່ອນັ້ນ "ຊົງຖືວ່າ
ເປັນຄວາມຊອບທຳແກ່ທ່ານ."

23ແຕ່ຄຳວ່າ, "ຊົງຖືວ່າເປັນຄວາມຊອບທຳແກ່ທ່ານນັ້ນ" ກໍບໍ່ໄດ້ຂຽນໄວ້ສຳລັບທ່ານຜູ້ດຽວ.

[24]ແຕ່ສຳລັບເຮົາທັງຫລາຍດ້ວຍ ຄືຈະຊົງຖືວ່າເປັນຄວາມຊອບທຳແກ່ພວກເຮົາ ຄືເຮົາທີ່ເຊື່ອໃນ
ພຣະອົງ ຜູ້ຊົງບັນດານໃຫ້ພຣະເຢຊູເຈົ້າຂອງພວກເຮົາຄືນຂຶ້ນມາຈາກຕາຍ. [25]ຄືພຣະເຢຊູຜູ້ຊົງ
ຖືກມອບໄວ້ໃຫ້ເຖິງສິ້ນພຣະຊົນແລ້ວ ເພາະການເຮັດຜິດຂອງເຮົາທັງຫລາຍແລະໄດ້ຖືກຊົງບັນ-
ດານໃຫ້ຄືນພຣະຊົນ ເພື່ອໃຫ້ເຮົາໄດ້ຊົງຖືວ່າເປັນຄົນຊອບທຳ.

# ບົດທີ 5

## ການຊົງຖືວ່າເປັນຄົນຊອບທຳ

[1]ເຫດສັນນັ້ນເມື່ອເຮົາທັງຫລາຍໄດ້ຊົງຖືວ່າເປັນຄົນຊອບທຳເພາະຄວາມເຊື່ອແລ້ວພວກເຮົາ
ຈຶ່ງມີສັນຕິສຸກ[ກ] ກັບພຣະເຈົ້າໂດຍທາງພຣະເຢຊູຄຣິດເຈົ້າຂອງພວກເຮົາ. [2]ໂດຍທາງພຣະອົງ
ເຮົາທັງຫລາຍຈຶ່ງໄດ້ຮັບຄວາມແນະນຳເຂົ້າໄປໃນຣົ່ມພຣະຄຸນ ທີ່ພວກເຮົາຢືນຢູ່ດ້ວຍຄວາມເຊື່ອ
ແລະພວກເຮົາຊົມຊື່ນຍິນດີ[ຂ] ໃນຄວາມຫວັງວ່າຈະໄດ້ມີສ່ວນໃນສະຫງ່າລາສີຂອງພຣະເຈົ້າ.
[3]ຫລາຍກວ່ານັ້ນອີກພວກເຮົາກໍຊົມຊື່ນຍິນດີໃນຄວາມຍາກລຳບາກດ້ວຍ ເພາະຮູ້ແລ້ວວ່າຄວາມ
ຍາກລຳບາກນັ້ນເຮັດໃຫ້ເກີດມີຄວາມອົດທົນ. [4]ແລະຄວາມອົດທົນນັ້ນເຮັດໃຫ້ເຮົາເປັນຄົນທີ່
ພຣະເຈົ້າຊົງເຫັນຊອບ ແລະການທີ່ຊົງເຫັນຊອບນັ້ນເຮັດໃຫ້ມີຄວາມໄວ້ວາງໃຈ. [5]ແລະຄວາມ
ໄວ້ວາງໃຈບໍ່ຫ່ອນເຮັດໃຫ້ມີຄວາມເສຍໃຈເພາະຜິດຫວັງ ເພາະພຣະເຈົ້າໄດ້ຊົງເປົ່າຄວາມຮັກ
ຂອງພຣະອົງເຂົ້າໃນໃຈຂອງພວກເຮົາ ດ້ວຍທາງພຣະວິນຍານບໍລິສຸດ ຊຶ່ງພຣະອົງໄດ້ຊົງປະ-
ທານໃຫ້ແກ່ເຮົາທັງຫລາຍແລ້ວ.

[6]ຂະນະທີ່ເຮົາທັງຫລາຍຍັງຂາດກຳລັງ ພຣະຄຣິດໄດ້ຊົງສິ້ນພຣະຊົນເພື່ອແທນຄົນຊົ່ວອະທຳ
ຕາມເວລາອັນເໝາະສົມ. [7]ດ້ວຍວ່າບໍ່ສູ້ຈະມີໃຜຍອມຕາຍແທນຄົນຊອບທຳ ແຕ່ບາງທີອາດຈະມີ
ຄົນກ້າຕາຍແທນຄົນດີກໍໄດ້. [8]ແຕ່ຝ່າຍພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງ-
ຫລາຍ ຄືຂະນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນ
ເຮົາທັງຫລາຍ. [9]ເຫດສັນນັ້ນເມື່ອພວກເຮົາໄດ້ຊົງຖືວ່າ ເປັນຄົນຊອບທຳແລ້ວດ້ວຍພຣະໂລຫິດ
ຂອງພຣະອົງ ຫລາຍກວ່ານັ້ນອີກເຮົາທັງຫລາຍຈະພົ້ນຈາກພຣະພິໂລດຂອງພຣະເຈົ້າໂດຍ
ພຣະອົງ. [10]ດ້ວຍວ່າເມື່ອເຮົາທັງຫລາຍຍັງເປັນສັດຕູຕໍ່ພຣະເຈົ້າ ພຣະເຈົ້າໄດ້ຊົງໂຜດໃຫ້ພວກ
ເຮົາໄດ້ຄືນດີກັບພຣະອົງ ໂດຍທີ່ພຣະບຸດຂອງພຣະອົງຊົງສິ້ນພຣະຊົນແລ້ວ ຫລາຍກວ່ານັ້ນອີກ
ເມື່ອເຮົາທັງຫລາຍໄດ້ກັບຄືນດີແລ້ວພວກເຮົາກໍຈະໄດ້ພົ້ນດ້ວຍການຊົງຄືນພຣະຊົນຂອງພຣະ-
ອົງ. [11]ບໍ່ພຽງແຕ່ເທົ່ານັ້ນ ເຮົາທັງຫລາຍຍັງຊົມຊື່ນຍິນດີໃນພຣະເຈົ້າ ໂດຍທາງພຣະເຢຊູຄຣິດ
ເຈົ້າຂອງພວກເຮົາ ຜູ້ຊົງເປັນເຫດໃຫ້ເຮົາທັງຫລາຍໄດ້ຄືນດີກັບພຣະເຈົ້າ.

## ອາດາມ ກັບ ພຣະຄຣິດ

[12]ເຫດສັນນັ້ນຄວາມຜິດບາບໄດ້ເຂົ້າມາໃນໂລກເພາະດ້ວຍມະນຸດຄົນດຽວ ແລະຄວາມຕາຍ
ກໍໄດ້ເກີດມາຍ້ອນຄວາມຜິດບາບນັ້ນ ຢ່າງນັ້ນແຫລະ, ຄວາມຕາຍຈຶ່ງໄດ້ລາມໄປເຖິງມະນຸດທຸກ

[ກ]ແທນທີ່ຈະເວົ້າ, “ພວກເຮົາຈຶ່ງມີສັນຕິສຸກ” ກໍອາດເວົ້າໄດ້ວ່າ, “ໃຫ້ເຮົາເປັນສັນຕິສຸກ.” [ຂ]ຫລືວ່າ, “ຈົ່ງ
ໃຫ້ພວກເຮົາຊົມຊື່ນຍິນດີ.”

ຄົນ ເພາະວ່າທຸກຄົນໄດ້ເຮັດບາບແລ້ວ. [13]ທີ່ຈິງ, ຄວາມຜິດບາບໄດ້ມີຢູ່ໃນໂລກແລ້ວກ່ອນມີ
ພຣະບັນຍັດ ແຕ່ວ່າເມື່ອບໍ່ມີພຣະບັນຍັດກໍບໍ່ຖືວ່າມີຜິດ. [14]ເຖິງຢ່າງໃດກໍດີ, ຄວາມຕາຍກໍໄດ້
ຄອບງຳອຳນາດຕະຫລອດມາ ຕັ້ງແຕ່ ອາດາມ ຈົນເຖິງ ໂມເຊ ເຖິງແມ່ນວ່າເຂົາບໍ່ໄດ້ເຮັດຜິດບາບ
ເໝືອນຢ່າງການລະເມີດຂອງ ອາດາມ ຜູ້ຊຶ່ງເປັນແບບໝາຍເຖິງພຣະຜູ້ທີ່ຈະສະເດັດມາພາຍ-
ຫລັງນັ້ນ. [15]ແຕ່ວ່າຂອງປະທານທີ່ມາດ້ວຍພຣະຄຸນນັ້ນບໍ່ເໝືອນຢ່າງການລະເມີດ ເພາະຖ້າຄົນ
ຈຳນວນຫລາຍຕ້ອງຕາຍເພາະການລະເມີດຂອງມະນຸດຄົນດຽວ ຫລາຍກວ່ານັ້ນອີກພຣະຄຸນ
ຂອງ ພຣະເຈົ້າ ແລະຂອງປະທານທີ່ມາດ້ວຍພຣະຄຸນຂອງພຣະອົງຜູ້ດຽວ ຄື ພຣະເຢຊູຄຣິດ ກໍ
ມີບໍລິບູນແກ່ຄົນຈຳນວນຫລາຍດ້ວຍ. [16]ແລະຂອງປະທານນັ້ນກໍບໍ່ເໝືອນກັບຜົນທີ່ເກີດຈາກ
ຄວາມຜິດບາບຂອງຄົນນັ້ນຜູ້ດຽວ ເພາະວ່າການຊົງພິພາກສາທີ່ເກີດຂຶ້ນເນື່ອງຈາກການລະເມີດ
ພຽງເທື່ອດຽວ ໄດ້ນຳໄປສູ່ການລົງໂທດ ແຕ່ຂອງປະທານນັ້ນໄດ້ມີຂຶ້ນພາຍຫລັງການລະເມີດ
ຫລາຍເທື່ອນັ້ນນຳໄປສູ່ການປົດປ່ອຍ. [17]ເພາະຖ້າການລະເມີດຂອງມະນຸດຄົນດຽວເປັນເຫດໃຫ້
ຄວາມຕາຍຄອບງຳເພາະຄົນຜູ້ດຽວນັ້ນ ຫລາຍກວ່ານັ້ນຄົນຈຳນວນຫລາຍທີ່ຮັບພຣະຄຸນອັນບໍ-
ລິບູນ ແລະຮັບຄວາມຊອບທຳຊຶ່ງເປັນຂອງປະທານ ກໍຈະຄຸ້ມຄອງຢູ່ໃນຊີວິດໂດຍພຣະອົງຜູ້ດຽວ
ຄື ພຣະເຢຊູຄຣິດ.

[18]ເຫດດັ່ງນີ້ການຊົງພິພາກສາລົງໂທດໄດ້ມາເຖິງຄົນທັງປວງ ເພາະການລະເມີດເທື່ອດຽວ
ສັນໃດ ການຊົງກະທຳອັນຊອບທຳເທື່ອດຽວກໍນຳການປົດປ່ອຍແລະຊີວິດມາເຖິງຄົນທັງປວງ
ສັນນັ້ນ. [19]ດ້ວຍວ່າຄົນຈຳນວນຫລາຍຕົກເປັນຄົນຜິດບາບເພາະມະນຸດຄົນດຽວທີ່ບໍ່ເຊື່ອຟັງສັນ-
ໃດ ຄົນຈຳນວນຫລາຍກໍຈະໄດ້ຊົງຖືວ່າເປັນຄົນຊອບທຳ ເພາະພຣະອົງຜູ້ດຽວທີ່ໄດ້ເຊື່ອຟັງສັນ-
ນັ້ນ. [20]ພຣະບັນຍັດໄດ້ມີຂຶ້ນກໍເພື່ອຄວາມຜິດຈະໄດ້ປະກົດຫລາຍຂຶ້ນ ແຕ່ທີ່ໃດມີຄວາມຜິດບາບ
ປະກົດຫລາຍຂຶ້ນ ພຣະກະລຸນາຄຸນກໍຈະມີຫລາຍລົ້ນຂຶ້ນໃນທີ່ນັ້ນ. [21]ເພື່ອວ່າຄວາມຜິດບາບໄດ້
ຄອບງຳໃຫ້ເຖິງຄວາມຕາຍສັນໃດ ພຣະກະລຸນາກໍຈະໄດ້ຄອບງຳດ້ວຍຄວາມຊອບທຳ ໃຫ້
ເຖິງຊີວິດອັນຕະຫລອດໄປເປັນນິດ ໂດຍທາງ ພຣະເຢຊູຄຣິດ ອົງ ພຣະຜູ້ເປັນເຈົ້າ ຂອງເຮົາທັງ-
ຫລາຍສັນນັ້ນ.

# ບົດທີ 6

## ການຕາຍແກ່ຄວາມຜິດບາບແຕ່ດຳເນີນຊີວິດໃນພຣະຄຣິດ

[1]ຖ້າຢ່າງນັ້ນແລ້ວພວກເຮົາຈະວ່າຢ່າງໃດ ຄວນທີ່ເຮົາທັງຫລາຍຈະຢູ່ໃນຄວາມຜິດບາບຕໍ່ໄປ
ເພື່ອໃຫ້ພຣະຄຸນມີຫລາຍຂຶ້ນຫລື. [2]ບໍ່ເປັນຢ່າງນັ້ນດອກ ພວກເຮົາຜູ້ຕາຍຕໍ່ຄວາມຜິດບາບແລ້ວ
ຈະດຳເນີນຊີວິດໃນຄວາມຜິດບາບຕໍ່ໄປໄດ້ຢ່າງໃດ. [3]ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ພວກເຮົາທຸກຄົນ
ທີ່ໄດ້ຮັບບັບຕິສະມາເຂົ້າໃນ ພຣະເຢຊູຄຣິດກໍໄດ້ຮັບບັບຕິສະມາເຂົ້າໃນຄວາມຕາຍຂອງພຣະອົງ.
[4]ເຫດສັນນັ້ນພວກເຮົາຈຶ່ງໄດ້ຖືກຝັງໄວ້ກັບພຣະອົງ ໂດຍການຮັບບັບຕິສະມາເຂົ້າສ່ວນໃນການ
ສິ້ນພຣະຊົນນັ້ນ ເພື່ອວ່າ ພຣະຄຣິດໄດ້ຖືກຊົງບັນດານໃຫ້ຄືນພຣະຊົນ ໂດຍລິດເດດອັນຮຸ່ງ-
ເຮືອງຂອງ ພຣະບິດາສັນໃດ ເຮົາທັງຫລາຍກໍຈະໄດ້ດຳເນີນຊີວິດໃໝ່ເໝືອນກັນສັນນັ້ນ.

5ເພາະວ່າຖ້າເຮົາທັງຫລາຍເຂົ້າຕິດສະໜິດກັບພຣະອົງແລ້ວໃນການຕາຍຢ່າງພຣະອົງ ເຮົາກໍ
ຈະເຂົ້າສະໜິດກັບພຣະອົງໃນການຖືກຊົງບັນດານໃຫ້ເປັນຄືນມາ ຢ່າງພຣະອົງໄດ້ຖືກຊົງບັນ-
ດານໃຫ້ຄືນພຣະຊົນ. 6ເຮົາທັງຫລາຍຮູ້ສິ່ງນີ້ແລ້ວວ່າ ເພດຄົນເກົ່າຂອງພວກເຮົານັ້ນໄດ້ຖືກຄຶງ
ໄວ້ກັບພຣະອົງແລ້ວ ເພື່ອເພດຄົນເກົ່າຊຶ່ງເປັນທີ່ຢູ່ຂອງຄວາມຜິດບາບນັ້ນຈະໄດ້ຖືກທຳລາຍເສຍ
ແລະພວກເຮົາຈຶ່ງຈະບໍ່ໄດ້ເປັນຂ້ອຍຂ້າຂອງຄວາມຜິດບາບອີກຕໍ່ໄປ. 7ດ້ວຍວ່າຜູ້ທີ່ຕາຍໄປແລ້ວ
ກໍພົ້ນຈາກຄວາມຜິດບາບ.

8ແຕ່ຖ້າວ່າເຮົາທັງຫລາຍຕາຍແລ້ວກັບພຣະຄຣິດ ພວກເຮົາເຊື່ອວ່າເຮົາຈະມີຊີວິດຢູ່ດ້ວຍກັນ
ກັບພຣະອົງ. 9ເຮົາທັງຫລາຍຮູ້ຢູ່ວ່າພຣະຄຣິດທີ່ຖືກຊົງບັນດານໃຫ້ຄືນພຣະຊົນແລ້ວນັ້ນ ຈະບໍ່
ມີການສິ້ນພຣະຊົນອີກ ຄວາມຕາຍກໍຈະບໍ່ມີອຳນາດບັງຄັບພຣະອົງຕໍ່ໄປ. 10ດ້ວຍວ່າທີ່ພຣະອົງ
ໄດ້ຊົງສິ້ນພຣະຊົນກໍສິ້ນພຣະຊົນຕໍ່ຄວາມຜິດບາບແຕ່ເທື່ອດຽວ ແຕ່ທີ່ພຣະອົງຊົງມີພຣະຊົນຢູ່ນັ້ນ
ພຣະອົງກໍຊົງມີພຣະຊົນຢູ່ເພື່ອພຣະເຈົ້າ. 11ເໝືອນກັນນັ້ນແຫລະ, ເຈົ້າທັງຫລາຍຈົ່ງຖືວ່າພວກ
ເຈົ້າໄດ້ຕາຍຕໍ່ຄວາມຜິດບາບແລ້ວ ແລະມີຊີວິດຢູ່ເພື່ອພຣະເຈົ້າໃນພຣະເຢຊູຄຣິດ.

12ເຫດສັນນັ້ນ, ຕໍ່ໄປຢ່າໃຫ້ຄວາມຜິດບາບປົກຄອງຮ່າງກາຍທີ່ຕ້ອງຕາຍຂອງເຈົ້າທັງຫລາຍ
ຊຶ່ງເຮັດໃຫ້ຕ້ອງເຊື່ອຟັງຕັນຫາຂອງກາຍນັ້ນ. 13ຢ່າມອບອະໄວຍະວະຂອງພວກເຈົ້າໃຫ້ແກ່
ຄວາມຜິດບາບຕໍ່ໄປ ເພື່ອໃຫ້ເປັນເຄື່ອງໃຊ້ໃນການອະທຳ ແຕ່ຈົ່ງມອບຕົວຂອງເຈົ້າຖວາຍແກ່
ພຣະເຈົ້າເປັນການສິ້ນສຸດ ເໝືອນກັບບຸກຄົນທີ່ເປັນຂຶ້ນມາຈາກຄວາມຕາຍແລ້ວ ແລະຈົ່ງມອບ
ອະໄວຍະວະຂອງເຈົ້າຖວາຍແກ່ພຣະເຈົ້າເປັນການສິ້ນສຸດ ເພື່ອເປັນເຄື່ອງໃຊ້ໃນການຊອບທຳ
ຕໍ່ໄປ. 14ດ້ວຍວ່າຕໍ່ໄປຄວາມຜິດບາບຈະບໍ່ບັງຄັບພວກເຈົ້າອີກ ເພາະວ່າເຈົ້າທັງຫລາຍບໍ່ໄດ້ຢູ່ໃຕ້
ພຣະບັນຍັດແຕ່ຢູ່ໃຕ້ພຣະຄຸນ.

## ຂ້ອຍຂ້າຂອງຄວາມຊອບທຳ

15ຖ້າດັ່ງນັ້ນແລ້ວ, ຈະເປັນຢ່າງໃດຕໍ່ໄປ ພວກເຈົ້າຈະພາກັນໄປເຮັດຜິດບາບ ເພາະບໍ່ຢູ່ໃຕ້
ພຣະບັນຍັດແຕ່ຢູ່ໃຕ້ພຣະຄຸນຢ່າງນັ້ນຫລື ບໍ່ແມ່ນຢ່າງນັ້ນດອກ. 16ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ຖ້າ
ພວກເຈົ້າເຄີຍມອບຕົວເຈົ້າຮັບໃຊ້ເຊື່ອຟັງຜູ້ໃດ ເຈົ້າກໍເປັນຂ້ອຍຂອງຜູ້ທີ່ເຈົ້າເຊື່ອຟັງນັ້ນ ຄືເປັນ
ຂ້ອຍຂອງຄວາມຜິດບາບທີ່ນຳໄປສູ່ຄວາມຕາຍຫລືເປັນຂ້ອຍຂອງການເຊື່ອຟັງຈົນໄດ້ຊົງຖືວ່າ
ເປັນຄົນຊອບທຳກໍດີ. 17ແຕ່ວ່າຈົ່ງໂມທະນາພຣະຄຸນຕໍ່ພຣະເຈົ້າ ເພາະເມື່ອກ່ອນນັ້ນເຈົ້າທັງ-
ຫລາຍເຄີຍເປັນຂ້ອຍຂ້າຂອງຄວາມຜິດບາບ ແຕ່ບັດນີ້ພວກເຈົ້າມີໃຈເຊື່ອຟັງຫລັກຄຳສອນນັ້ນ
ຊຶ່ງຊົງໃຫ້ຄຸ້ມຄອງພວກເຈົ້າ. 18ເມື່ອພວກເຈົ້າຖືກຊົງໂຜດໃຫ້ພົ້ນຈາກຄວາມຜິດບາບແລ້ວ ພວກ
ເຈົ້າໄດ້ກັບມາເປັນຂ້ອຍຂ້າຂອງຄວາມຊອບທຳ. 19(ເຮົາຍົກເອົາຕົວຢ່າງມະນຸດມາກ່າວ ເພາະ
ເຫດຄວາມບົກພ່ອງຢ່າງມະນຸດທຳມະດາຂອງພວກເຈົ້າ) ເພາະເຈົ້າເຄີຍມອບອະໄວຍະວະຂອງ
ພວກເຈົ້າ ເປັນຂ້ອຍຂ້າຂອງຄວາມຊົ່ວມົວໝອງແລະການອະທຳ ເພື່ອເຮັດໃຫ້ການອະທຳສັນ-
ໃດບັດນີ້ເຈົ້າທັງຫລາຍຈົ່ງມອບອະໄວຍະວະຂອງພວກເຈົ້າໃຫ້ເປັນຂ້ອຍຂ້າຂອງຄວາມຊອບທຳ
ເປັນການສິ້ນສຸດ ເພື່ອໃຫ້ເຖິງການຊຳລະໃຫ້ບໍລິສຸດນັ້ນ. 20ເມື່ອເຈົ້າທັງຫລາຍເປັນຂ້ອຍຂ້າ
ຂອງຄວາມຜິດບາບຢູ່ນັ້ນ ຄວາມຊອບທຳກໍບໍ່ໄດ້ຄຸ້ມຄອງພວກເຈົ້າ.

21ຂະນະນັ້ນພວກເຈົ້າໄດ້ປະໂຫຍດອັນໃດໃນການເຫລົ່ານັ້ນຊຶ່ງບັດນີ້ພວກເຈົ້າກໍລະອາຍ
ດ້ວຍວ່າຜົນສຸດທ້າຍຂອງການເຫລົ່ານັ້ນກໍຄືຄວາມຕາຍ. 22ແຕ່ບັດນີ້ເຈົ້າທັງຫລາຍ ໄດ້ຖືກຊົງ
ໂຜດໃຫ້ພົ້ນຈາກການເປັນຂ້ອຍຂ້າຂອງຄວາມຜິດບາບ ແລະກັບມາເປັນຂ້ອຍຂ້າຂອງພຣະເຈົ້າ
ແລ້ວ ຜົນຕອບແທນທີ່ພວກເຈົ້າໄດ້ຮັບນັ້ນຄືໃຈບໍລິສຸດ ແລະຜົນສຸດທ້າຍກໍຄືຊີວິດອັນຕະຫລອດ
ໄປເປັນນິດ. 23ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ ແຕ່ຂອງພຣະລາຊະທານອັນ
ໂຜດມາແຕ່ພຣະເຈົ້າ ກໍຄືຊີວິດອັນຕະຫລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງ
ພວກເຮົາ.

# ບົດທີ 7

## ຍົກເລື່ອງການແຕ່ງງານມາເປັນຂໍ້ປຽບທຽບ

1ພວກພີ່ນ້ອງທັງຫລາຍເອີຍ, ພວກເຈົ້າບໍ່ຮູ້ຫລື (ເຮົາກຳລັງເວົ້າກັບຄົນທີ່ຮູ້ຈັກກົດລະບຽບ
ແລ້ວ) ວ່າກົດໝາຍອັນໃດມີອຳນາດເໜືອມະນຸດ ກໍໃນຂະນະທີ່ເຂົາຍັງມີຊີວິດຢູ່ເທົ່ານັ້ນ. 2ເປັນ-
ຕົ້ນວ່າຜູ້ຍິງທີ່ຜົວຍັງມີຊີວິດຢູ່ນັ້ນຕ້ອງຢູ່ໃນກົດລະບຽບຜົວເມຍ ແຕ່ຖ້າຜົວຕາຍຍິງນັ້ນກໍພົ້ນຈາກ
ກົດອັນນັ້ນ. 3ສັນນັ້ນຖ້າຍິງນັ້ນຍອມເປັນຂ້ອຍຂອງຊາຍອື່ນໃນເມື່ອຜົວຍັງມີຊີວິດຢູ່ ຍິງນັ້ນກໍໄດ້
ຊື່ວ່າເປັນຍິງຫລິ້ນຊູ້ ແຕ່ຖ້າຜົວຕາຍແລ້ວຍິງນັ້ນກໍພົ້ນຈາກກົດລະບຽບຜົວເມຍ ຖ້າແມ່ນຍິງນັ້ນ
ໄປເປັນຂອງຊາຍອື່ນກໍບໍ່ມີຜິດໃນຖານຫລິ້ນຊູ້. 4ຢ່າງນັ້ນແຫລະ, ພີ່ນ້ອງທັງຫລາຍຂອງເຮົາ
ເອີຍ ພວກເຈົ້າໄດ້ຕາຍຈາກພຣະບັນຍັດເໝືອນກັນ ໂດຍທາງພຣະກາຍຂອງພຣະຄຣິດ[ກ]
ເພື່ອເຈົ້າຈະຕົກເປັນຂອງຜູ້ອື່ນ ຄືຂອງພຣະອົງຜູ້ຖືກຊົງບັນດານໃຫ້ຄືນພຣະຊົນແລ້ວ ເພື່ອພວກ
ເຮົາຈະໄດ້ເກີດຜົນຖວາຍແກ່ພຣະເຈົ້າ. 5ເພາະວ່າເມື່ອພວກເຮົາດຳເນີນຊີວິດຢູ່ຕາມຢ່າງມະນຸດ
ຕັນຫາຊົ່ວທີ່ປະກົດໂດຍທາງພຣະບັນຍັດນັ້ນໄດ້ເຮັດໃຫ້ອະໄວຍະວະຂອງເຮົາເກີດຜົນນຳໄປສູ່
ຄວາມຕາຍ. 6ແຕ່ວ່າບັດນີ້ເຮົາທັງຫລາຍໄດ້ພົ້ນຈາກພຣະບັນຍັດແລ້ວ ຄືໄດ້ຕາຍຈາກສິ່ງທີ່ເຄີຍ
ຜູກມັດເຮົາໄວ້ເມື່ອກ່ອນນັ້ນ ເພື່ອເຮົາທັງຫລາຍຈະບໍ່ໄດ້ບົວລະບັດຕາມຢ່າງເກົ່າ ຄືຕາມຕົວອັກ-
ສອນໃນພຣະບັນຍັດ ແຕ່ຈະໄດ້ບົວລະບັດຕາມຢ່າງໃໝ່ ຄືຕາມລັກສະນະພຣະວິນຍານ.

## ເລື່ອງພຣະບັນຍັດແລະຄວາມຜິດບາບ

7ຖ້າຢ່າງນັ້ນແລ້ວເຮົາຈະວ່າຢ່າງໃດ ພຣະບັນຍັດນັ້ນຄືບາບຫລື ບໍ່ແມ່ນຢ່າງນັ້ນດອກ ແຕ່ຖ້າ
ພຣະບັນຍັດບໍ່ໄດ້ບົ່ງໄວ້ ເຮົາກໍຄົງບໍ່ໄດ້ຮູ້ວ່າອັນໃດເປັນຄວາມຜິດບາບ ເພາະວ່າຖ້າພຣະບັນຍັດ
ບໍ່ໄດ້ຫ້າມວ່າ, “ຢ່າໂລບ” ເຮົາກໍຄົງບໍ່ຮູ້ວ່າຄວາມໂລບນັ້ນຄືອັນໃດ. 8ແຕ່ວ່າຄວາມຜິດບາບໄດ້ຖື
ເອົາຂໍ້ພຣະບັນຍັດເປັນຊ່ອງທາງເຮັດໃຫ້ຕັນຫາຊົ່ວທຸກຢ່າງເກີດຂຶ້ນໃນຕົວເຮົາ ເພາະວ່າຖ້າບໍ່ມີ
ພຣະບັນຍັດ ຄວາມຜິດບາບກໍຕາຍເສຍແລ້ວ. 9ເມື່ອກ່ອນນັ້ນເຮົາກໍດຳເນີນຊີວິດຢູ່ໂດຍບໍ່ມີ
ພຣະບັນຍັດ ແຕ່ເມື່ອມີພຣະບັນຍັດແລ້ວຄວາມຜິດບາບກໍເກີດຂຶ້ນ. 10ແລະເຮົາກໍຕາຍ ພຣະ-
ບັນຍັດຊຶ່ງຊົງປະທານເພື່ອໃຫ້ມີຊີວິດນັ້ນ ກໍປະກົດແລ້ວວ່າເປັນເຫດໃຫ້ເຮົາຕ້ອງຕາຍ. 11ເພາະ-
ວ່າຄວາມຜິດບາບໄດ້ຖືເອົາພຣະບັນຍັດເປັນຊ່ອງທາງລໍ້ລວງເຮົາ ແລະຂ້າໃຫ້ເຮົາຕາຍດ້ວຍ

[ກ]ໝາຍຄວາມວ່າ “ເພາະວ່າໄດ້ກາຍເປັນສ່ວນໜຶ່ງໃນພຣະກາຍຂອງພຣະຄຣິດ.”

ພຣະບັນຍັດນັ້ນ. 12ດ້ວຍເຫດນັ້ນພຣະບັນຍັດຈິ່ງເປັນສິ່ງສັກສິດແລະຂໍ້ບັນຍັດກໍສັກສິດທັງຍຸດຕິ
ທໍາແລະດີງາມ.

13ຖ້າຢ່າງນັ້ນແລ້ວສິ່ງອັນດີໄດ້ນໍາຄວາມຕາຍມາໃຫ້ເຮົາຫລື ບໍ່ແມ່ນຢ່າງນັ້ນດອກ ແມ່ນ
ຄວາມຜິດບາບນັ້ນແຫລະ, ຄືບາບທີ່ອາໃສສິ່ງດີໄດ້ນໍາຄວາມຕາຍມາໃຫ້ເຮົາ ເພື່ອໃຫ້ປະກົດວ່າ-
ຄວາມຜິດບາບນັ້ນເປັນຜິດບາບອັນແທ້ຈິງ ແລະດ້ວຍອາໃສພຣະບັນຍັດນັ້ນຄວາມຜິດບາບຈິ່ງ
ໄດ້ປະກົດວ່າຊົ່ວຮ້າຍເຫລືອເກີນ.

## ເລື່ອງທໍາມະດາສອງຢ່າງຂອງມະນຸດ

14ພວກເຮົາຮູ້ແລ້ວວ່າພຣະບັນຍັດນັ້ນເປັນມາໂດຍຝ່າຍ ພຣະວິນຍານ ແຕ່ວ່າເຮົານີ້ເປັນແຕ່
ມະນຸດທໍາມະດາຊຶ່ງຖືກຂາຍໄວ້ໃຫ້ຢູ່ໃຕ້ຄວາມຜິດບາບ. 15ເຮົາບໍ່ເຂົ້າໃຈການທີ່ເຮົາເຄີຍເຮັດຢູ່
ເພາະວ່າ ເຮົາບໍ່ໄດ້ເຮັດຕາມສິ່ງທີ່ເຮົາປາດຖະໜາ ແຕ່ເຮົາກັບໄປເຮັດສິ່ງທີ່ເຮົາກຽດຊັງນັ້ນ.
16ບັດນີ້ຖ້າເຮົາເຮັດສິ່ງທີ່ເຮົາບໍ່ປາດຖະໜານັ້ນ ເຮົາຍອມຮັບວ່າພຣະບັນຍັດນັ້ນດີ. 17ສັນນັ້ນຈິ່ງ
ບໍ່ແມ່ນເຮົາເປັນຜູ້ເຮັດ ແຕ່ແມ່ນຄວາມຜິດບາບທີ່ອາໃສຢູ່ໃນຕົວເຮົາເປັນຜູ້ເຮັດ. 18ເພາະເຮົາຮູ້
ວ່າໃນຕົວເຮົາ ຄືເນື້ອກາຍຂອງເຮົາ ບໍ່ມີການດີຈັກຢ່າງຢູ່ນໍາ ເພາະວ່າເຈດຕະນາດີນັ້ນເຮົາກໍມີຢູ່
ແຕ່ທີ່ຈະເຮັດການດີນັ້ນເຮົາບໍ່ໄດ້ເຮັດ. 19ດ້ວຍວ່າການດີຊຶ່ງເຮົາປາດຖະໜານັ້ນ ເຮົາບໍ່ໄດ້ເຮັດ
ແຕ່ການຊົ່ວທີ່ເຮົາບໍ່ປາດຖະໜາເຮັດ ເຮົາກໍຍັງເຮັດຢູ່. 20ຖ້າແມ່ນເຮົາຍັງເຮັດສິ່ງທີ່ເຮົາບໍ່ປາດ-
ຖະໜາຈະເຮັດນັ້ນ ກໍບໍ່ແມ່ນຕົວເຮົາເປັນຜູ້ເຮັດ ແຕ່ແມ່ນຄວາມຜິດບາບທີ່ອາໃສຢູ່ໃນຕົວເຮົານັ້ນ
ເປັນຜູ້ເຮັດ.

21ດັ່ງນັ້ນເຮົາຈິ່ງເຫັນວ່າເປັນກົດທໍາມະດາຢ່າງໜຶ່ງ ຄືເມື່ອໃດເຮົາຕັ້ງໃຈຈະເຮັດການດີຄວາມ
ຊົ່ວກໍມາຕັນເຮົາ. 22ເພາະວ່າສ່ວນເລິກໃນໃຈຂອງເຮົານັ້ນ ກໍປິຕິຍິນດີໃນພຣະບັນຍັດຂອງ
ພຣະເຈົ້າ. 23ແຕ່ເຮົາເຫັນກົດອີກຢ່າງໜຶ່ງມີຢູ່ໃນອະໄວຍະວະຂອງເຮົາຊຶ່ງຕໍ່ສູ້ກັບກົດແຫ່ງຈິດໃຈ
ຂອງເຮົາ ແລະຜູກເຮົາໄວ້ໃຕ້ບັງຄັບກົດແຫ່ງຄວາມຜິດບາບຊຶ່ງຢູ່ໃນອະໄວຍະວະຂອງເຮົາ.
24ໂອ, ເຮົານີ້ຊ່າງເປັນຄົນທຸກຍາກເຂັນໃຈແທ້ໜໍ ໃຜແດ່ຈະຊ່ອຍເຮົາໃຫ້ພົ້ນຈາກຮ່າງກາຍທີ່
ຕ້ອງຕາຍນີ້.[ກ] 25ເຮົາຂອບພຣະຄຸນ ພຣະເຈົ້າ ໂດຍທາງ ພຣະເຢຊູຄຣິດ ເຈົ້າຂອງເຮົາທັງຫລາຍ
ເຫດດັ່ງນີ້ທາງດ້ານຈິດໃຈເຮົາກໍຍອມຮັບໃຊ້ຕາມຂໍ້ບັນຍັດຂອງ ພຣະເຈົ້າ ແຕ່ດ້ານຮ່າງກາຍ
ຂອງເຮົາກໍເປັນຂ້ອຍຂ້າຢູ່ໃຕ້ກົດແຫ່ງຄວາມຜິດບາບ.

# ບົດທີ 8

## ຊີວິດຝ່າຍວິນຍານ

1ບັດນີ້ການລົງໂທດຈິ່ງບໍ່ມີແກ່ຄົນທັງຫລາຍທີ່ຢູ່ໃນ ພຣະເຢຊູຄຣິດ. 2ເພາະວ່າກົດຂອງ ພຣະ-
ວິນຍານ ອັນເຮັດໃຫ້ມີຊີວິດໃນ ພຣະເຢຊູຄຣິດນັ້ນ ໄດ້ເຮັດໃຫ້ເຮົາພົ້ນຈາກກົດຂອງຄວາມຜິດ
ບາບແລະຄວາມຕາຍ. 3ດ້ວຍວ່າສິ່ງທີ່ພຣະບັນຍັດເຮັດບໍ່ໄດ້ເພາະເນື້ອກາຍເຮັດໃຫ້ອ່ອນກໍາລັງ
ເສຍ ພຣະເຈົ້າກໍໄດ້ຊົງເຮັດແລ້ວ ໂດຍໄດ້ຊົງໃຊ້ ພຣະບຸດຂອງພຣະອົງມາໃນສະພາບເໝືອນ

[ກ]ພາສາເດີມວ່າ, “ຮ່າງກາຍແຫ່ງຄວາມຕາຍນີ້” ແຕ່ເທົ່ານັ້ນ.

ເນື້ອກາຍທີ່ຜິດບາບ ແລະເພື່ອຊົງໄຖ່ຄວາມຜິດບາບ[ກ] ພຣະອົງຈຶ່ງຊົງລົງໂທດບາບໃນເນື້ອ
ກາຍນັ້ນ. 4ເພື່ອໃຫ້ຂໍ້ຄຳສັ່ງອັນຍຸດຕິທຳຂອງພຣະບັນຍັດສຳເລັດໃນຕົວພວກເຮົາ ທີ່ບໍ່ໄດ້ດຳ-
ເນີນຊີວິດຕາມຢ່າງມະນຸດແຕ່ຕາມຝ່າຍ ພຣະວິນຍານ.

5ເພາະວ່າຄົນທັງຫລາຍທີ່ຢູ່ຝ່າຍມະນຸດກໍໃສ່ໃຈໃນສິ່ງທີ່ເປັນຝ່າຍມະນຸດ ແຕ່ຄົນທັງຫລາຍທີ່-
ຢູ່ຝ່າຍ ພຣະວິນຍານກໍໃສ່ໃຈໃນສິ່ງທີ່ເປັນຝ່າຍ ພຣະວິນຍານ. 6ດ້ວຍວ່າໃສ່ໃຈຢູ່ກັບຝ່າຍມະນຸດ
ນັ້ນກໍຄືຄວາມຕາຍ ແລະການໃສ່ໃຈກັບຝ່າຍ ພຣະວິນຍານນັ້ນກໍຄືຊີວິດແລະສັນຕິສຸກ. 7ເຫດ
ວ່າການທີ່ໃສ່ໃຈກັບຝ່າຍມະນຸດນັ້ນກໍເປັນສັດຕູຕໍ່ ພຣະເຈົ້າ ເພາະບໍ່ຍອມຢູ່ໃຕ້ບັງຄັບພຣະບັນ-
ຍັດຂອງ ພຣະເຈົ້າ ແລະທີ່ຈິງ, ຈະຢູ່ໃຕ້ບັງຄັບພຣະບັນຍັດນັ້ນກໍບໍ່ໄດ້. 8ແລະຄົນທັງຫລາຍທີ່ຢູ່
ຝ່າຍມະນຸດຈະເປັນທີ່ຊອບພຣະໄທ ພຣະເຈົ້າ ກໍບໍ່ໄດ້. 9ອັນໜຶ່ງ, ຖ້າແມ່ນ ພຣະວິນຍານ ຂອງ
ພຣະເຈົ້າ ຊົງສະຖິດຢູ່ໃນເຈົ້າທັງຫລາຍຢ່າງແທ້ຈິງແລ້ວ ພວກເຈົ້າກໍບໍ່ຢູ່ຝ່າຍມະນຸດ ແຕ່ຢູ່ຝ່າຍ
ພຣະວິນຍານ ແຕ່ຖ້າຜູ້ໃດບໍ່ມີ ພຣະວິນຍານ ຂອງ ພຣະຄຣິດ ຜູ້ນັ້ນກໍບໍ່ເປັນຂອງພຣະອົງ.
10ແຕ່ຖ້າ ພຣະຄຣິດ ຊົງຢູ່ໃນເຈົ້າທັງຫລາຍແລ້ວ, ເຖິງແມ່ນວ່າເນື້ອຕົວຂອງພວກເຈົ້າຕາຍແລ້ວ
ເພາະຄວາມຜິດບາບ ແຕ່ວິນຍານຈິດຂອງເຈົ້າກໍມີຊີວິດຢູ່ເພາະຄວາມຊອບທຳ. 11ຖ້າ ພຣະວິນ-
ຍານ ຂອງພຣະອົງ ຜູ້ຊົງບັນດານໃຫ້ ພຣະເຢຊູ ຊົງຄືນພຣະຊົນນັ້ນ ຊົງສະຖິດຢູ່ໃນພວກເຈົ້າ
ພຣະອົງຜູ້ຊົງ ບັນດານ ໃຫ້ ພຣະເຢຊູຄຣິດ ຊົງ ຄືນ ພຣະຊົນ ແລ້ວນັ້ນກໍຈະຊົງບັນດານ ໃຫ້ກາຍທີ່
ຕ້ອງຕາຍຂອງພວກເຈົ້າຄືນມີຊີວິດໃໝ່ ດ້ວຍລິດແຫ່ງ ພຣະວິນຍານ ຂອງພຣະອົງທີ່ຊົງສະຖິດຢູ່
ໃນພວກເຈົ້າ.

12ເຫດດັ່ງນັ້ນພີ່ນ້ອງທັງຫລາຍເອີຍ, ພວກເຮົາໄດ້ເປັນໜີ້ ແຕ່ບໍ່ແມ່ນໜີ້ໃນທາງເນື້ອກາຍຊຶ່ງ
ດຳເນີນຊີວິດຕາມຢ່າງມະນຸດນັ້ນ. 13ເພາະຖ້າເຈົ້າທັງຫລາຍດຳເນີນຊີວິດຕາມຢ່າງເນື້ອກາຍ
ພວກເຈົ້າຄົງຈະຕາຍ ແຕ່ຖ້າໂດຍລິດ ພຣະວິນຍານ ພວກເຈົ້າໄດ້ທຳລາຍການຂອງຝ່າຍເນື້ອ
ກາຍເສຍ ເຈົ້າກໍຄົງຈະມີຊີວິດຢູ່. 14ເພາະວ່າ ພຣະວິນຍານຂອງ ພຣະເຈົ້າ ຊົງນຳພາຜູ້ໃດ ຜູ້ນັ້ນ
ແຫລະ, ເປັນບຸດຂອງ ພຣະເຈົ້າ. 15ເຫດວ່າເຈົ້າທັງຫລາຍບໍ່ໄດ້ຮັບວິນຍານທີ່ໃຫ້ມີນິໄສຢ່າງ
ຂ້ອຍຂ້າ ຊຶ່ງນຳເຖິງຄວາມຢ້ານກົວອີກ ແຕ່ພວກເຈົ້າໄດ້ຮັບ ພຣະວິນຍານຜູ້ຊົງໃຫ້ເປັນບຸດຂອງ
ພຣະເຈົ້າ ທີ່ໃຫ້ເຮົາທັງຫລາຍຮ້ອງເອີ້ນ ພຣະເຈົ້າວ່າ, "ອັບບາ"[ຂ] ຄື ພຣະບິດາ. 16ຝ່າຍ ພຣະ-
ວິນຍານ ນັ້ນຊົງຮ່ວມເປັນພະຍານກັບວິນຍານຂອງເຮົາທັງຫລາຍວ່າ ພວກເຮົາເປັນບຸດຂອງ
ພຣະເຈົ້າ. 17ແລະຖ້າເຮົາທັງຫລາຍເປັນບຸດແລ້ວ ເຮົາກໍເປັນຜູ້ຮັບມໍລະດົກດ້ວຍ ຄືເປັນຜູ້ຮັບມໍ-
ລະດົກຈາກ ພຣະເຈົ້າ ແລະເປັນຜູ້ຮ່ວມຮັບມໍລະດົກກັບ ພຣະຄຣິດ ຖ້າແມ່ນເຮົາທັງຫລາຍໄດ້
ທົນທຸກທໍລະມານດ້ວຍກັນກັບພຣະອົງນັ້ນພວກເຮົາກໍຈະໄດ້ຮັບສະຫງ່າລາສີກັບພຣະອົງເໝືອນ
ກັນ.

## ຄວາມສະຫງ່າລາສີທີ່ຈະມີໃນພາຍໜ້າ

18ເພາະເຮົາເຫັນວ່າຄວາມທຸກລຳບາກໃນສະໄໝປັດຈຸບັນ ບໍ່ສົມຄວນທີ່ຈະເອົາໄປປຽບກັບ

[ກ]ຫລືວ່າ, "ເປັນເຄື່ອງບູຊາໄຖ່ໂທດບາບ." [ຂ]ຄວາມວ່າ "ອັບບາ" ແມ່ນພາສາໜຶ່ງທີ່ເຄີຍໃຊ້ໃນສະໄໝນັ້ນ ຊຶ່ງແປວ່າ "ບິດາ."

ສະຫງ່າລາສີທີ່ຈະເຜີຍໃຫ້ເຮົາທັງຫລາຍເຫັນ. [19]ດ້ວຍວ່າສັບພະສິ່ງທີ່ຊົງສ້າງແລ້ວ ມີຄວາມ-
ພຽນຄອຍຖ້າປາດຖະໜາໃຫ້ບຸດທັງຫລາຍຂອງ ພຣະເຈົ້າ ປະກົດ. [20]ເພາະວ່າສັບພະສິ່ງເຫລົ່າ-
ນັ້ນໄດ້ຕົກຢູ່ໃຕ້ອຳນາດຂອງອະນິຈັງ ບໍ່ໃຊ່ຕາມໃຈຊອບຂອງມັນເອງ ແຕ່ວ່າເປັນໄປຕາມທີ່
ພຣະເຈົ້າ ຊົງໃຫ້ມັນຕົກຢູ່ນັ້ນ ດ້ວຍມີຄວາມຫວັງໃຈວ່າ, [21]ສັບພະສິ່ງເຫລົ່ານັ້ນຈະໄດ້ພົ້ນຈາກ
ອຳນາດຂອງຄວາມເສື່ອມສູນ ແລະຈະໄດ້ເຂົ້າໃນເສລີພາບອັນຮຸ່ງເຮືອງແຫ່ງບຸດທັງຫລາຍຂອງ
ພຣະເຈົ້າ. [22]ເຮົາທັງຫລາຍຮູ້ຢູ່ວ່າສັບພະສິ່ງທີ່ຊົງສ້າງມານັ້ນ ກໍກຳລັງໂອ່ຍຄາງແລະເປັນທຸກ
ເຈັບປວດດ້ວຍກັນຈົນທຸກວັນນີ້. [23]ແລະບໍ່ໃຊ່ແຕ່ເທົ່ານັ້ນ ແຕ່ພວກເຮົາຜູ້ໄດ້ຮັບ ພຣະວິນຍານ
ເປັນຜົນທົວທີ ຕົວເຮົາເອງກໍເໝືອນກັນ ຍັງໂອ່ຍຄາງຄອຍຖ້າການທີ່ ພຣະເຈົ້າ ຊົງຮັບເປັນບຸດ
ຄືທີ່ຈະຊົງໃຫ້ເນື້ອກາຍຂອງພວກເຮົາພົ້ນຈາກຕາຍ. [24]ເຫດວ່າເຮົາທັງຫລາຍໄດ້ພົ້ນກໍເພາະດ້ວຍ
ຄວາມຫວັງນີ້ ແຕ່ຄວາມຫວັງໃນສິ່ງທີ່ຕາເຫັນຢູ່ກໍບໍ່ແມ່ນຄວາມຫວັງ ດ້ວຍວ່າໃຜແດ່ຈະຍັງຫວັງ
ໃນສິ່ງທີ່ຕົນເຫັນແລ້ວ. [25]ແຕ່ຖ້າເຮົາທັງຫລາຍຄອຍຫວັງໃນສິ່ງທີ່ເຮົາຍັງບໍ່ໄດ້ເຫັນ ເຮົາຈຶ່ງມີ
ຄວາມພາກພຽນຄອຍຖ້າສິ່ງນັ້ນ.

[26]ໃນທຳນອງດຽວກັນນັ້ນແຫລະ, ພຣະວິນຍານ ຊົງຊ່ອຍຊູເຮົາທັງຫລາຍ ເມື່ອພວກເຮົາອ່ອນ
ກຳລັງລົງ ເພາະເຮົາທັງຫລາຍບໍ່ຮູ້ວ່າເຮົາຄວນຈະອ້ອນວອນຂໍສິ່ງໃດ ແຕ່ອົງ ພຣະວິນຍານ ຊົງ
ຊ່ອຍຂໍແທນພວກເຮົາ ດ້ວຍການຖອດຫຸ່ນຢ່າງຫາຄຳເວົ້າບໍ່ໄດ້. [27]ແລະພຣະອົງຜູ້ຊົງສອດສ່ອງ
ຮູ້ໃຈມະນຸດ ກໍຊົງຊາບຄວາມຄຶດຂອງ ພຣະວິນຍານ ເພາະ ພຣະວິນຍານ ຊົງອ້ອນວອນຂໍສຳລັບ
ພວກໄພ່ພົນຂອງ ພຣະເຈົ້າ ຕາມນ້ຳພຣະໄທຂອງພຣະອົງ.[ກ] [28]ພວກເຮົາຮູ້ແລ້ວວ່າ ພຣະເຈົ້າ
ຊົງຮ່ວມກັບຄົນທັງຫລາຍທີ່ຮັກພຣະອົງ ເພື່ອໃຫ້ເກີດຜົນດີໃນທຸກສິ່ງ ຄືຄົນທັງປວງທີ່ພຣະອົງ
ຊົງ ເອີ້ນໄວ້ຕາມພຣະປະສົງຂອງພຣະອົງ. [29]ດ້ວຍວ່າຄົນທັງຫລາຍທີ່ພຣະອົງໄດ້ຊົງສັງເກດຮູ້
ລ່ວງໜ້າແລ້ວນັ້ນ ພຣະອົງກໍໄດ້ຊົງກຳນົດໄວ້ກ່ອນ ເພື່ອໃຫ້ເປັນຕາມແບບລັກສະນະແຫ່ງ
ພຣະບຸດ ຂອງພຣະອົງ ເພື່ອ ພຣະບຸດ ນັ້ນ ຈະ ໄດ້ ເປັນບຸດກົກ ໃນ ຖ້າມກາງ ພວກນ້ອງ ທັງຫລາຍ.
[30]ແລະບັນດາຜູ້ທີ່ພຣະອົງໄດ້ຊົງກຳນົດໄວ້ລ່ວງໜ້າແລ້ວນັ້ນ ພຣະອົງກໍໄດ້ຊົງເອີ້ນມາດ້ວຍແລະ
ຜູ້ທີ່ພຣະອົງຊົງເອີ້ນມານັ້ນ ພຣະອົງກໍຊົງຖືເປັນຄົນຊອບທຳ ແລະຜູ້ທີ່ພຣະອົງຊົງຖືວ່າເປັນຄົນ
ຊອບທຳນັ້ນ ພຣະອົງກໍຊົງໂຜດໃຫ້ມີສະຫງ່າລາສີດ້ວຍ.

## ຄວາມຮັກຂອງພຣະເຈົ້າທີ່ມີຢູ່ໃນພຣະເຢຊູຄຣິດ

[31]ຖ້າເປັນຢ່າງນັ້ນເຮົາທັງຫລາຍຈະວ່າຢ່າງໃດກ່ຽວກັບເລື່ອງນີ້ ຖ້າ ພຣະເຈົ້າ ຊົງຢູ່ຝ່າຍພວກ
ເຮົາໃຜຈະຕໍ່ສູ້ເຮົາ. [32]ພຣະອົງຜູ້ຊົງບໍ່ໄດ້ຫວງ ພຣະບຸດ ຂອງພຣະອົງເອງ ແຕ່ໄດ້ຊົງປະທານ
ພຣະບຸດ ນັ້ນໄວ້ເພື່ອປະໂຫຍດແກ່ເຮົາທັງຫລາຍ ຖ້າເປັນດັ່ງນັ້ນພຣະອົງຈະບໍ່ຊົງໂຜດປະທານ
ສິ່ງສາລະພັດ ໃຫ້ພວກເຮົາດ້ວຍກັນກັບ ພຣະບຸດ ນັ້ນຫລື. [33]ໃຜອາດຈະຟ້ອງຄົນທັງຫລາຍທີ່
ພຣະເຈົ້າ ໄດ້ຊົງເລືອກໄວ້ແລ້ວ ພຣະເຈົ້າ ໄດ້ຊົງປົດປ່ອຍເຂົາແລ້ວ. [34]ໃຜຈະເປັນຜູ້ລົງໂທດອີກ
ພຣະເຢຊູຄຣິດ ໄດ້ຊົງສິ້ນພຣະຊົນແລ້ວ ແລະຫລາຍກວ່ານັ້ນອີກໄດ້ຊົງຄືນພຣະຊົນແລ້ວ ພຣະ-
ອົງຊົງສະຖິດຢູ່ກ້ຳຂວາພຣະຫັດຂອງ ພຣະເຈົ້າ ພຣະອົງນັ້ນແຫລະ, ຊົງອ້ອນວອນເພື່ອເຮົາທັງ-

[ກ]ພາສາເດີມວ່າ “ຕາມພຣະເຈົ້າ” ແຕ່ເທົ່ານັ້ນ.

ຫລາຍດ້ວຍ. 35ໃຜຈະໃຫ້ພວກເຮົາຂາດຈາກຄວາມຮັກຂອງ ພຣະຄຣິດ ໄດ້ ຈະເປັນຄວາມທຸກ
ລຳບາກ, ຫລືຄວາມທໍລະມານຈິດໃຈ, ຫລືການຂົ່ມເຫງ, ຫລືການອຶດຢາກ, ຫລືການເປືອຍ
ກາຍ, ຫລືການຖືກໂພຍໄພ, ຫລືການຖືກຄົມດາບຫລື. 36ຕາມທີ່ຂຽນໄວ້ໃນພຣະຄຳພີແລ້ວວ່າ,
"ເພາະເຫັນແກ່ພຣະອົງພວກຂ້າພຣະອົງຈຶ່ງຖືກຂ້າໝົດມື້ຈົນຄ່ຳ ແລະຖືວ່າເປັນຢ່າງໂຕແກະສຳ-
ລັບເອົາໄປຂ້າ." 37ແຕ່ວ່າໃນເຫດການທັງປວງເຫລົ່ານີ້ພວກເຮົາກໍມີໄຊຊະນະຢູ່ຢ່າງເຫລືອລົ້ນ
ດ້ວຍພຣະອົງຜູ້ຊົງຮັກເຮົາທັງຫລາຍນັ້ນ. 38ເຫດວ່າເຮົາເຊື່ອຢ່າງໝັ້ນຄົງວ່າ ຄວາມຕາຍຫລືຊີ-
ວິດກໍດີ, ເທວະດາຫລືຜູ້ປົກຄອງກໍດີ, ສິ່ງທີ່ມີຢູ່ດຽວນີ້ຫລືສິ່ງຈະມີມາໃນພາຍໜ້າກໍດີ, ຫລືລິດ-
ເດດທັງຫລາຍ, 39ຄວາມສູງ[ກ] , ຫລືຄວາມເລິກກໍດີ, ຫລືສິ່ງອື່ນໃດທີ່ໄດ້ຊົງສ້າງແລ້ວນັ້ນກໍດີ
ກໍຈະບໍ່ສາມາດເຮັດໃຫ້ພວກເຮົາຂາດຈາກຄວາມຮັກຂອງ ພຣະເຈົ້າ ຊຶ່ງມີຢູ່ໃນ ພຣະເຢຊູຄຣິດ
ເຈົ້າຂອງເຮົາທັງຫລາຍນັ້ນ.

# ບົດທີ 9

## ພຣະເຈົ້າຊົງເລືອກຕັ້ງຊົນຊາດອິສຣາເອນເປັນໄພ່ພົນຂອງພຣະອົງ

1ເຮົາຢູ່ໃນ ພຣະຄຣິດ ເຮົາເວົ້າຄວາມຈິງ ເຮົາບໍ່ເວົ້າມຸສາ ໃຈສຳນຶກຜິດແລະຊອບຂອງເຮົາກໍ
ເປັນພະຍານຝ່າຍເຮົາດ້ວຍ ພຣະວິນຍານບໍລິສຸດ. 2ວ່າເຮົາມີຄວາມທຸກໂສກໜັກແລະມີຄວາມ-
ເຈັບຮ້ອນໃຈບໍ່ຂາດ. 3ເພາະຖ້າເປັນປະໂຫຍດເຮົາປາດຖະໜາຢາກໃຫ້ເຮົາເອງຖືກຊົງສາບ
ແລະຖືກຊົງຕັດຂາດຈາກ ພຣະຄຣິດ ເພາະເຫັນແກ່ພີ່ນ້ອງຂອງເຮົາ ຄືຍາດຂອງເຮົາຕາມເຊື້ອ
ຊາດ. 4ເພາະເຂົາເປັນຊົນຊາດອິສຣາເອນ ໄດ້ຮັບການຊົງແຕ່ງຕັ້ງໃຫ້ເປັນບຸດຂອງ ພຣະເຈົ້າ
ແລະຄວາມສະຫງ່າລາສີຂອງ ພຣະເຈົ້າ ໄດ້ປະກົດແກ່ເຂົາ ເຂົາໄດ້ຮັບບັນດາພຣະສັນຍາ, ແລະ
ການຊົງປະທານພຣະບັນຍັດ, ກັບພິທີນະມັດສະການ ພຣະເຈົ້າ, ແລະຄຳປະຕິຍານທັງຫລາຍ.
5ພວກບັນພະບຸລຸດ[ຂ] ກໍເປັນຂອງເຮົາ ແລະ ພຣະຄຣິດ ໄດ້ຊົງບັງເກີດເປັນມະນຸດໃນເຊື້ອສາຍ
ຂອງເຂົາ ຂໍໃຫ້ ພຣະເຈົ້າ ຜູ້ຊົງເປັນໃຫຍ່ເໜືອສິ່ງສາລະພັດ ຈົ່ງໄດ້ຮັບພຣະກຽດເປັນນິດເທີນ[ຄ]
ອາແມນ.

6ແຕ່ບໍ່ໃຊ່ພຣະທຳຂອງ ພຣະເຈົ້າ ໄດ້ລົ້ມເຫລວໄປ ເພາະວ່າເຂົາທັງຫລາຍທີ່ເກີດມາຈາກອິ-
ສຣາເອນນັ້ນກໍບໍ່ແມ່ນວ່າເປັນຊາດອິສຣາເອນ ແທ້ທຸກຄົນ. 7ແລະບໍ່ແມ່ນວ່າທຸກຄົນທີ່ເກີດມາແຕ່
ເຊື້ອສາຍຂອງ ອັບຣາຮາມ ເປັນລູກແທ້ຂອງທ່ານ ແຕ່ (ພຣະເຈົ້າ ໄດ້ຊົງກ່າວແກ່ ອັບຣາຮາມ
ວ່າ) "ເຂົາຈະເອີ້ນເຊື້ອສາຍຂອງເຈົ້າທາງເຊື້ອສາຍ ອີຊາກ." 8ໝາຍຄວາມວ່າຄົນທີ່ເປັນບຸດຂອງ
ພຣະເຈົ້າ ນັ້ນ ບໍ່ໃຊ່ຜູ້ທີ່ເກີດຕາມທຳມະຊາດ ແຕ່ແມ່ນຜູ້ທີ່ເກີດຕາມພຣະສັນຍາຈຶ່ງຖືວ່າເປັນຜູ້
ສືບເຊື້ອສາຍໄດ້. 9ເພາະວ່າພຣະສັນຍາໄດ້ກ່າວໄວ້ດັ່ງນີ້ວ່າ, "ເຮົາຈະມາໃນຍາມນີ້ ແລະນາງ
ຊາຣາ ຈະມີລູກຊາຍ." 10ແລະບໍ່ແມ່ນແຕ່ເທົ່ານັ້ນ ແຕ່ວ່ານາງ ເຣເບຂາ ກໍໄດ້ມີທ້ອງກັບຊາຍຜູ້ໜຶ່ງ
ດ້ວຍກັນກັບ ອີຊາກ ບັນພະບຸລຸດຂອງພວກເຮົາ. 11ແລະເພື່ອພຣະປະສົງໃນການຊົງເລືອກຜູ້ໜຶ່ງ

[ກ]ຂໍ້ຄວາມນີ້ເຄີຍໃຊ້ເພື່ອເວົ້າເຖິງເລື່ອງດວງດາວໃນຊັ້ນຟ້າ. [ຂ]ຄື ອັບຣາຮາມ, ອີຊາກ, ແລະຢາໂຄບ ຜູ້
ເປັນກົກເຄົ້າຂອງຊາດອິສຣາເອນ. [ຄ]ຫລືວ່າ "ຄືພຣະເຈົ້າຜູ້ຊົງເປັນໃຫຍ່ຢູ່ເໜືອສິ່ງສາລະພັດ ຜູ້ຊົງຮັບ
ພຣະກຽດເປັນນິດ."

ໄວ້ນັ້ນຈະຕັ້ງໝັ້ນຢູ່ ພຣະອົງຈຶ່ງຊົງກ່າວແກ່ນາງວ່າ, "ອ້າຍຈະໄດ້ຮັບໃຊ້ນ້ອງ"[ກ] ພຣະອົງຊົງ
ກ່າວໄວ້ດັ່ງນັ້ນເມື່ອລູກທັງສອງຍັງບໍ່ທັນເກີດມາ ທັງບໍ່ໄດ້ເຮັດການດີຫລືຊົ່ວ. 12ເພື່ອການຊົງ
ເລືອກນັ້ນບໍ່ໄດ້ເປັນໄປຕາມການປະຕິບັດ ແຕ່ເປັນໄປຕາມພຣະອົງຊົງເອີ້ນ.[ຂ] 13ຕາມທີ່ມີຄໍາ
ຊຽນໄວ້ໃນພຣະຄໍາພີວ່າ, "ຢາໂຄບນັ້ນເຮົາໄດ້ຮັກ ແລະ ເອຊາວເຮົາໄດ້ຊັງ."
14ຖ້າຢ່າງນັ້ນແລ້ວພວກເຮົາຈະວ່າຢ່າງໃດ ຝ່າຍພຣະເຈົ້າບໍ່ຊົງຍຸດຕິທໍາຫລື ບໍ່ແມ່ນຢ່າງນັ້ນ
ດອກ. 15ເພາະພຣະອົງຊົງກ່າວແກ່ໂມເຊວ່າ, "ເຮົາປະສົງຈະກະລຸນາຜູ້ໃດ ກໍຈະກະລຸນາຜູ້ນັ້ນ
ແລະເຮົາຢາກເມດຕາຜູ້ໃດ ກໍເມດຕາສົງເວດຜູ້ນັ້ນ. 16ເພາະສັນນັ້ນຈຶ່ງບໍ່ຂຶ້ນຢູ່ກັບຄວາມຕັ້ງໃຈ
ຫລືການພະຍາຍາມ ແຕ່ຂຶ້ນຢູ່ກັບພຣະກະລຸນາຂອງພຣະເຈົ້າ. 17ເພາະມີຂໍ້ໃນພຣະຄໍາພີບອກ
ແກ່ຟາຣາໂອວ່າ, "ເພາະເຫດນີ້ແຫລະ, ເຮົາຈຶ່ງໄດ້ຍົກເຈົ້າຂຶ້ນ ເພື່ອເຮົາຈະໄດ້ສະແດງລິດຂອງ
ເຮົາໃຫ້ປະກົດທາງຕົວເຈົ້າ ແລະເພື່ອໃຫ້ນາມຂອງເຮົາປະກາດກ່າວໄປທົ່ວໂລກ." 18ເຫດດັ່ງນັ້ນ
ພຣະອົງຊົງມີພຣະປະສົງຈະກະລຸນາຜູ້ໃດ ກໍຈະຊົງກະລຸນາແກ່ຜູ້ນັ້ນ ແລະພຣະອົງຊົງປະສົງຈະ
ໃຫ້ຜູ້ໃດມີໃຈແຂງກະດ້າງ ກໍຈະຊົງໃຫ້ຜູ້ນັ້ນມີໃຈແຂງກະດ້າງ.

## ພຣະພິໂລດແລະພຣະເມດຕາຂອງພຣະເຈົ້າ

19ແລ້ວເຈົ້າຈະກ່າວແກ່ເຮົາວ່າ, "ຖ້າເປັນດັ່ງນັ້ນເປັນຫຍັງພຣະອົງຈຶ່ງຍັງຊົງຕິຕຽນເພາະວ່າຜູ້
ໃດຈະຂັດຂືນນໍ້າພຣະໄທຂອງພຣະອົງໄດ້." 20ແຕ່ວ່າມະນຸດເອີຍ, ເຈົ້າແມ່ນຜູ້ໃດໜໍຈຶ່ງກ່າວໂຕ້
ຕອບກັບພຣະເຈົ້າໄດ້ ສິ່ງທີ່ຖືກປັ້ນຈະກັບກ່າວແກ່ຜູ້ປັ້ນໄດ້ຫລືວ່າ, "ເປັນຫຍັງເຈົ້າຈຶ່ງປັ້ນຂ້ອຍ
ຢ່າງນີ້." 21ຝ່າຍຊ່າງປັ້ນໝໍ້ບໍ່ມີສິດທີ່ຈະເອົາດິນກ້ອນດຽວກັນມາປັ້ນເປັນພາຊະນະທີ່ສວຍງາມ
ອັນໜຶ່ງ ແລະເປັນພາຊະນະທໍາມະດາໜຶ່ງຫລື. 22ດັ່ງນັ້ນພຣະເຈົ້າຊົງມີພຣະປະສົງຈະສະແດງ
ພຣະພິໂລດແລະຊົງໃຫ້ລິດເດດຂອງພຣະອົງປະກົດ ຈຶ່ງຊົງອົດກັ້ນພຣະໄທໄວ້ດົນນານຕໍ່ພວກ
ເຫລົ່ານັ້ນ ທີ່ເປັນພາຊະນະອັນສົມຄວນແກ່ພຣະພິໂລດ ຊຶ່ງຈັດຕຽມໄວ້ສໍາລັບຄວາມຈິບຫາຍ.
23ແລະເພື່ອຈະໄດ້ຊົງສະແດງຄວາມສະຫງ່າລາສີອັນອຸດົມຂອງພຣະອົງ ແກ່ບັນດາຜູ້ທີ່ເປັນພາ-
ຊະນະແຫ່ງຄວາມເມດຕາຊຶ່ງພຣະອົງໄດ້ຊົງຈັດຕຽມໄວ້ກ່ອນໃຫ້ສົມກັບສະຫງ່າລາສີນັ້ນ. 24ຄື
ເຮົາທັງຫລາຍທີ່ພຣະອົງໄດ້ຊົງເອີ້ນມາແລ້ວ ບໍ່ໃຊ່ຊົງເອີ້ນຈາກພວກຢິວພວກດຽວ ແຕ່ຈາກ
ພວກຕ່າງຊາດດ້ວຍ. 25ດັ່ງທີ່ພຣະອົງໄດ້ຊົງກ່າວໄວ້ໃນພຣະທໍາໂຮເຊອາວ່າ,

"ເຮົາຈະເອີ້ນເຂົາເຫລົ່ານັ້ນວ່າພົນລະເມືອງຂອງເຮົາ
ຊຶ່ງເມື່ອກ່ອນບໍ່ໄດ້ເປັນພົນລະເມືອງຂອງເຮົາ
ແລະເຮົາຈະເອີ້ນວ່າເປັນທີ່ຮັກ ຊຶ່ງເມື່ອກ່ອນບໍ່ໄດ້ເປັນທີ່ຮັກ.
26 ແລະໃນບ່ອນທີ່ຊົງກ່າວແກ່ເຂົາວ່າ,
'ເຈົ້າທັງຫລາຍບໍ່ແມ່ນພົນລະເມືອງຂອງເຮົາ'
ໃນບ່ອນນັ້ນແຫລະ, ເຂົາຈະໄດ້ຊື່ວ່າ
ເປັນບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່."

27ແລະເອຊາຢາໄດ້ຮ້ອງປະກາດເລື່ອງພວກອິສຣາເອນວ່າ, "ເຖິງແມ່ນວ່າຈໍານວນພວກລູກ

[ກ]ພາສາເດີມວ່າ, "ຈະເປັນຂ້ອຍໃຊ້ຂອງນ້ອງ." [ຂ]ດ້ວຍວ່າ "ດ້ວຍພຣະອົງຜູ້ຊົງໃຊ້ຊົງເອີ້ນເອົານັ້ນ."

ຂອງ ອິສຣາເອນ ຈະມີເໝືອນເມັດຊາຍທີ່ທະເລ ແຕ່ຜູ້ທີ່ລອດພົ້ນນັ້ນຈະມີຈຳນວນໜ້ອຍ. 28ດ້ວຍ
ວ່າອົງ ພຣະຜູ້ເປັນເຈົ້າ ຈະຊົງບັນດານໃຫ້ເປັນໄປເທິງແຜ່ນດິນໂລກ ຕາມຄຳຕັດສິນຂອງພຣະ-
ອົງໂດຍໄວແລະຄົບຖ້ວນ.” 29ແລະຕາມທີ່ ເອຊາຢາ ໄດ້ກ່າວໄວ້ລ່ວງໜ້າວ່າ,

“ຖ້າ ພຣະເຈົ້າຜູ້ຊົງເປັນຈອມພົນ
ບໍ່ໄດ້ຊົງໂຜດໃຫ້ພວກເຮົາມີເຊື້ອສາຍເຫລືອຢູ່
ເຮົາທັງຫລາຍກໍຈະກາຍເປັນເໝືອນເມືອງ ໂຊໂດມ
ແລະຈະເປັນເໝືອນເມືອງ ໂກໂມຣາ ແລ້ວ.”

## ຊົນຊາດອິສຣາເອນແລະຂ່າວປະເສີດ

30ຖ້າເປັນດັ່ງນັ້ນ ແລ້ວພວກເຮົາຈະວ່າຢ່າງໃດ ຈະວ່າພວກຕ່າງຊາດບາງຄົນທີ່ບໍ່ໄດ້ສະ-
ແຫວງຫາຄວາມຊອບທຳກໍຍັງໄດ້ຮັບຄວາມຊອບທຳ ຄືຄວາມຊອບທຳທີ່ເກີດຂຶ້ນໂດຍຄວາມ
ເຊື່ອ. 31ແຕ່ພວກ ອິສຣາເອນ ທີ່ໄດ້ສະແຫວງຫາຄວາມຊອບທຳຕາມບັນຍັດ ກໍບໍ່ໄດ້ບັນລຸຕາມ
ກົດບັນຍັດນັ້ນ. 32ເປັນເພາະເຫດໃດ ເພາະເຫດວ່າເຂົາບໍ່ໄດ້ສະແຫວງຫາດ້ວຍຄວາມເຊື່ອ ແຕ່
ໄດ້ສະແຫວງຫາດ້ວຍການປະຕິບັດ ເຂົາຈຶ່ງຕຳສະດຸດກ້ອນຫີນທີ່ໃຫ້ສະດຸດນັ້ນ. 33ດັ່ງມີຄຳຂຽນ
ໄວ້ໃນພຣະຄຳພີວ່າ,

“ນີ້ແຫລະ, ເຮົາໄດ້ວາງຫີນກ້ອນໜຶ່ງໄວ້ໃນເມືອງຊີໂອນ
ເປັນກ້ອນຫີນທີ່ໃຫ້ຕຳສະດຸດ ຄືກ້ອນຫີນທີ່ໃຫ້ລົ້ມລົງ
ແຕ່ຜູ້ທີ່ເຊື່ອໃນພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ.”

# ບົດທີ 10

1ພີ່ນ້ອງທັງຫລາຍເອີຍ, ຄວາມປາດຖະໜາໃນຈິດໃຈຂອງເຮົາ ແລະຄຳອ້ອນວອນຕໍ່ ພຣະ-
ເຈົ້າ ເພື່ອຊາວ ອິສຣາເອນ ນັ້ນ ຄືຂໍເພື່ອໃຫ້ເຂົາພົ້ນ. 2ເຮົາເປັນພະຍານໃຫ້ເຂົາວ່າ ເຂົາມີໃຈ
ຮ້ອນຮົນທີ່ຈະປະຕິບັດ ພຣະເຈົ້າ ແຕ່ບໍ່ເປັນໄປຕາມຄວາມຮູ້ແລະສະຕິປັນຍາ. 3ດ້ວຍວ່າເຂົາບໍ່
ຮູ້ຈັກຄວາມຊອບທຳທີ່ ພຣະເຈົ້າ ຊົງປະທານໃຫ້ ແຕ່ໄດ້ພະຍາຍາມຕັ້ງຄວາມຊອບທຳຂອງຕົນ
ເອງຂຶ້ນ ເຂົາຈຶ່ງບໍ່ຍອມຕົວຢູ່ໃຕ້ຄວາມຊອບທຳທີ່ມາຈາກ ພຣະເຈົ້າ. 4ເພາະວ່າ ພຣະຄຣິດ ຊົງ
ເປັນຜູ້ເຮັດໃຫ້ພຣະບັນຍັດຖືກຍົກເລີກ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຊົງຖືວ່າເປັນຄົນຊອບທຳ.

## ມີຄວາມພົ້ນສຳລັບມະນຸດ

5ໂມເຊ ໄດ້ຂຽນເລື່ອງຄວາມຊອບທຳຊຶ່ງມີພຣະບັນຍັດເປັນຫລັກວ່າ, “ຄົນໃດທີ່ປະຕິບັດຕາມກໍ
ຈະໄດ້ຊີວິດດ້ວຍການປະຕິບັດນັ້ນ.” 6ແຕ່ຄວາມຊອບທຳຊຶ່ງມີຄວາມເຊື່ອເປັນຫລັກກໍກ່າວໄວ້
ຢ່າງນີ້ວ່າ, “ຢ່ານຶກໃນໃຈຂອງຕົນວ່າ ‘ໃຜຈະຂຶ້ນເມືອຟ້າສະຫວັນ’” (ຄືຈະນຳ ພຣະຄຣິດ ລົງ
ມາ). 7“ຫລື ‘ໃຜຈະລົງໄປໃນເຫວເລິກ’” (ຄືຈະນຳ ພຣະຄຣິດ ຂຶ້ນມາຈາກຕາຍ). 8ແຕ່ຄວາມ
ຊອບທຳນັ້ນໄດ້ກ່າວວ່າຢ່າງໃດ ໄດ້ກ່າວວ່າ, “ຖ້ອຍຄຳນັ້ນຢູ່ໃກ້ເຈົ້າຢູ່ໃນປາກແລະຢູ່ໃນໃຈຂອງ
ເຈົ້າ” (ຄືຖ້ອຍຄຳທີ່ກ່າວດ້ວຍຄວາມເຊື່ອ ທີ່ພວກເຮົາປະກາດນັ້ນ.) 9ຄືວ່າຖ້າເຈົ້າຈະຮັບດ້ວຍ
ປາກຂອງເຈົ້າວ່າ, “ພຣະເຢຊູ ຊົງເປັນອົງ ພຣະຜູ້ເປັນເຈົ້າ” ແລະເຊື່ອໃນຈິດໃຈວ່າ ພຣະເຈົ້າ ໄດ້

ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນ. 10ເຫດວ່າທີ່ມະນຸດ
ໄດ້ເຊື່ອກໍເຊື່ອດ້ວຍໃຈຂອງຕົນ ຈຶ່ງໄດ້ຊົງຖືວ່າເປັນຄົນຊອບທຳ ແລະທີ່ໄດ້ຍອມຮັບກໍຍອມຮັບ
ດ້ວຍປາກ ຈຶ່ງຖືກຊົງໂຜດໃຫ້ພົ້ນ. 11ເພາະຂໍ້ພຣະທຳຄຳພີກ່າວໄວ້ວ່າ, "ບຸກຄົນໃດທີ່ເຊື່ອໃນ
ພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ." 12ເຫດວ່າພວກຢິວ ແລະພວກຕ່າງຊາດນັ້ນ ພຣະເຈົ້າບໍ່
ຊົງຖືວ່າຕ່າງກັນ ດ້ວຍວ່າອົງ ພຣະຜູ້ເປັນເຈົ້າ ອົງດຽວຊົງ ເປັນອົງ ພຣະຜູ້ເປັນເຈົ້າ ຂອງຄົນທັງ
ປວງ ແລະຊົງ ໂຜດຢ່າງບໍລິບູນແກ່ຄົນທັງປວງທີ່ທູນຂໍຕໍ່ພຣະອົງ. 13ເພາະວ່າ, "ທຸກຄົນທີ່ຮ້ອງ
ອອກພຣະນາມຂອງອົງ ພຣະຜູ້ເປັນເຈົ້າກໍຈະພົ້ນ."

14ແຕ່ຜູ້ທີ່ຍັງບໍ່ໄດ້ເຊື່ອໃນພຣະອົງນັ້ນ ເຂົາຈະທູນຂໍຕໍ່ພຣະອົງໄດ້ຢ່າງໃດ ແລະຜູ້ທີ່ຍັງບໍ່ໄດ້
ຍິນເຖິງເລື່ອງພຣະອົງນັ້ນ ຈະເຊື່ອໃນພຣະອົງໄດ້ຢ່າງໃດ ແລະເມື່ອບໍ່ມີຜູ້ໃດປະກາດໃຫ້ເຂົາຟັງ
ເຂົາຈະໄດ້ຍິນເຖິງເລື່ອງພຣະອົງໄດ້ຢ່າງໃດ. 15ແລະຖ້າບໍ່ມີໃຜໃຊ້ເຂົາໄປ ເຂົາຈະໄປປະກາດ
ໄດ້ຢ່າງໃດ ດັ່ງມີຄຳຂຽນໄວ້ໃນພຣະຄຳພີແລ້ວວ່າ, "ຕີນຂອງພວກຄົນທີ່ນຳຂ່າວດີມາກໍງົດງາມ
ປານໃດໜໍ." 16ແຕ່ບໍ່ແມ່ນທຸກຄົນໄດ້ເຊື່ອຟັງຂ່າວປະເສີດນັ້ນ ເພາະ ເອຊາຢາ ໄດ້ກ່າວໄວ້ວ່າ,
"ພຣະອົງເຈົ້າເອີຍ, ມີໃຜແດ່ໜໍໄດ້ເຊື່ອຟັງຕາມທີ່ເຂົາໄດ້ຍິນຈາກພວກເຮົານັ້ນ." 17ດັ່ງນັ້ນຄວາມ
ເຊື່ອເກີດຂຶ້ນໄດ້ກໍເພາະການໄດ້ຍິນ ແລະການໄດ້ຍິນເກີດຂຶ້ນໄດ້ກໍເພາະການປະກາດເລື່ອງ
ພຣະຄຣິດ.

18ແຕ່ເຮົາຖາມວ່າ, "ເຂົາບໍ່ໄດ້ຍິນຫລື" ແທ້ຈິງເຂົາໄດ້ຍິນແລ້ວ"ສຽງຂອງເຂົາໄດ້ແຜ່ໄປທົ່ວ
ແຜ່ນດິນໂລກແລະຖ້ອຍຄຳຂອງເຂົາກໍເຖິງທີ່ສຸດພິພົບໂລກ." 19ຝ່າຍເຮົາຖາມອີກວ່າ, "ພວກອິ-
ສຣາເອນບໍ່ໄດ້ຮູ້ຫລື" ຕອນຕົ້ນ, ໂມເຊ ໄດ້ກ່າວວ່າ, "ເຮົາຈະຍົວະໃຫ້ເຈົ້າທັງຫລາຍອິດສາຊົນ
ຊາດທີ່ຍັງບໍ່ເປັນປະເທດ ເຮົາຈະຍົວະໃຫ້ເຈົ້າເຄືອງແຄ້ນປະເທດທີ່ເປັນຊົນຊາດໂງ່." 20ແລ້ວ
ເອຊາຢາ ກ້າກ່າວວ່າ, "ຄົນເຫລົ່ານັ້ນທີ່ບໍ່ໄດ້ສະແຫວງຫາເຮົາໄດ້ພົບເຮົາແລະເຮົາໄດ້ປະກົດແກ່
ຄົນທີ່ບໍ່ຖາມຫາເຮົາ." 21ແຕ່ເພິ່ນກ່າວເຖິງພວກ ອິສຣາເອນ ວ່າ, "ເຮົາໄດ້ຢື່ນມືຂອງເຮົາອອກ
ຕະຫລອດມື້ຄອຍຮັບໄພ່ພົນຈຳພວກໜຶ່ງທີ່ບໍ່ເຊື່ອຟັງແລະດື້ດ້ານ."

# ບົດທີ 11

## ພຣະເຈົ້າຊົງພຣະເມດຕາພວກອິສຣາເອນ

1ເມື່ອເປັນດັ່ງນັ້ນແລ້ວເຮົາຈຶ່ງຖາມວ່າ, "ພຣະເຈົ້າ ໄດ້ຊົງປະຖິ້ມໄພ່ພົນຂອງພຣະອົງແລ້ວຫລື"
ບໍ່ແມ່ນຢ່າງນັ້ນດອກ ເພາະເຮົາເອງກໍເປັນຊົນຊາດ ອິສຣາເອນ, ເປັນເຊື້ອສາຍຂອງ ອັບຣາຮາມ
ໃນກະກຸນ ເບັນຢາມິນ. 2ພຣະເຈົ້າບໍ່ໄດ້ຊົງລະຖິ້ມໄພ່ພົນຂອງພຣະອົງທີ່ພຣະອົງໄດ້ຊົງຮັບຮູ້ໄວ້
ກ່ອນແລ້ວ ເຈົ້າທັງຫລາຍບໍ່ຮູ້ເລື່ອງຊຶ່ງຂຽນໄວ້ໃນພຣະຄຳພີ ທີ່ກ່າວເຖິງ ເອຊາຢາ ນັ້ນຫລື ເພິ່ນ
ໄດ້ກາບທູນກ່າວ ໂທດຂອງພວກ ອິສຣາເອນ ຕໍ່ ພຣະເຈົ້າ ວ່າ, 3"ພຣະອົງເຈົ້າເອີຍ, ເຂົາໄດ້ຂ້າ
ພວກຜູ້ປະກາດພຣະທຳຂອງພຣະອົງ ແທ່ນບູຊາຂອງພຣະອົງກໍໄດ້ຂຸດທຳລາຍລົງເສຍແລ້ວ
ເຫລືອຢູ່ແຕ່ຂ້າພຣະອົງຜູ້ດຽວ ແລະເຂົາກຳລັງຊອກຫາຊ່ອງທາງທີ່ຈະປະຫານຊີວິດຂອງຂ້າ
ພຣະອົງ." 4ແລ້ວ ພຣະເຈົ້າ ໄດ້ຕອບເພິ່ນວ່າຢ່າງໃດ ກໍຊົງຕອບວ່າຢ່າງນີ້, "ເຮົາມີຄົນເຫລືອຢູ່

ສຳລັບເຮົາເຈັດພັນຄົນ ທີ່ບໍ່ໄດ້ຄຸເຂົ່າລົງໄຫວ້ຮູບບາອານ."
5ດັ່ງນັ້ນແຫລະ, ບັດນີ້ກໍຍັງມີພວກທີ່ເຫລືອຢູ່ຕາມທີ່ພຣະເຈົ້າໄດ້ຊົງເລືອກໄວ້ດ້ວຍພຣະຄຸນ.
6ແຕ່ຖ້າເປັນທາງພຣະຄຸນ ກໍບໍ່ເປັນທາງການປະຕິບັດຕໍ່ໄປ ຖ້າເປັນທາງການປະຕິບັດ ພຣະຄຸນ
ກໍບໍ່ເປັນພຣະຄຸນອີກຕໍ່ໄປ. 7ຖ້າດັ່ງນັ້ນແລ້ວຈະເປັນຢ່າງໃດ ພວກອິສຣາເອນບໍ່ໄດ້ພົບສິ່ງທີ່ເຂົາ
ຊອກຫານັ້ນ ແຕ່ຜູ້ທີ່ພຣະເຈົ້າຊົງເລືອກໄວ້ນັ້ນເປັນຜູ້ໄດ້ພົບ ແລະນອກນັ້ນກໍແມ່ນຄົນທີ່ຊົງໃຫ້
ເກີດໃຈແຂງກະດ້າງໄປ. 8ຕາມທີ່ມີຄຳຂຽນໄວ້ໃນພຣະຄຳພີວ່າ,

"ພຣະເຈົ້າໄດ້ປະທານໃຈທີ່ເຫງົາຫລັບ
ປະທານຕາທີ່ເບິ່ງບໍ່ເຫັນ ແລະຫູທີ່ຟັງບໍ່ໄດ້ຍິນ
ໃຫ້ແກ່ເຂົາຈົນເຖິງທຸກວັນນີ້."

9ກະສັດດາວິດຊົງກ່າວວ່າ,

"ຂໍຊົງໃຫ້ໂຕະອາຫານຂອງເຂົາ
ເກີດເປັນບ້ວງແຮ້ວແລະເຄື່ອງຈັບເຂົາເອງ
ເປັນສິ່ງໃຫ້ສະດຸດໃຈແລະເປັນສິ່ງນຳຈ່ອງເວນແກ່ເຂົາ.
10 ຂໍຊົງໃຫ້ຕາຂອງເຂົາມືດມົວໄປເພື່ອເຂົາຈະເບິ່ງບໍ່ເຫັນ
ແລະໃຫ້ຫລັງຂອງເຂົາກ່ອມລົງຢູ່ສະເໝີ."

11ເຮົາຈຶ່ງຖາມວ່າ, "ເມື່ອພວກອິສຣາເອນໄດ້ຕຳສະດຸດນັ້ນ ເຂົາໄດ້ລົ້ມລົງເສຍໄປຫລື" ບໍ່
ແມ່ນຢ່າງນັ້ນດອກ ແຕ່ດ້ວຍການພະລາດລົ້ມຂອງເຂົານັ້ນ ຄວາມພົ້ນຈຶ່ງມາເຖິງພວກຕ່າງຊາດ
ເພື່ອຈະໃຫ້ພວກອິສຣາເອນມີໃຈເຫິງຫວງຂຶ້ນ. 12ແຕ່ຖ້າການພະລາດລົ້ມຂອງເຂົານັ້ນເປັນເຫດ
ໃຫ້ທັງໂລກເກີດຄວາມສົມບູນຂຶ້ນ ແລະຖ້າຄວາມບົກພ່ອງຂອງເຂົາເປັນເຫດໃຫ້ຄົນຕ່າງຊາດ
ເກີດຄວາມສົມບູນຂຶ້ນ ຫາກໄດ້ເຂົາເພີ່ມເຂົ້າມາດ້ວຍ ຈະດີກວ່າເທົ່າໃດໜໍ.

## ຄວາມພົ້ນສຳລັບຄົນຕ່າງຊາດ

13ແຕ່ເຮົາກ່າວແກ່ພວກເຈົ້າທີ່ເປັນຄົນຕ່າງຊາດ ເພາະເຮົາເປັນອັກຄະສາວົກທີ່ມາຍັງຊາວ
ຕ່າງຊາດ ເຮົາຈຶ່ງຍົກຍ້ອງໜ້າທີ່ຂອງເຮົາ. 14ເພື່ອເຮົາຈະໄດ້ຊວນເພື່ອນຮ່ວມຊາດຂອງເຮົາ ຈະ
ເປັນພິທີໃດກໍຕາມ ສຸດແລ້ວແຕ່ຈະໃຫ້ເຂົາເກີດຄວາມເຫິງຫວງ ເພື່ອບາງຄົນຈະພົ້ນໄດ້.
15ເພາະວ່າຖ້າການທີ່ເພື່ອນຮ່ວມຊາດຂອງເຮົາຖືກພຣະເຈົ້າຊົງປະຖິ້ມ ເປັນເຫດໃຫ້ຄົນທັງໂລກ
ກັບຄືນເປັນໄມຕີກັບພຣະອົງການທີ່ພຣະອົງຊົງຮັບເຂົາກັບຄືນມາອີກນັ້ນ ກໍເປັນເໝືອນກັບວ່າ
ເຂົາໄດ້ຕາຍໄປແລ້ວແລະກັບຄືນມາໃໝ່. 16ຖ້າເຂົ້າຈີ່ກ້ອນແຮກຖືກຖວາຍແກ່ພຣະເຈົ້າ ແປ້ງ
ນວດແລ້ວທັງອ່າງກໍເປັນຂອງພຣະອົງ ແລະຖ້າຮາກຖືກຖວາຍແກ່ພຣະອົງ ກິ່ງກ້ານທັງໝົດກໍ
ເປັນຂອງພຣະອົງດ້ວຍ.

17ແຕ່ຖ້າພຣະເຈົ້າຊົງຫັກບາງກິ່ງອອກເສຍແລ້ວ, ແລະໄດ້ຊົງນຳເຈົ້າຜູ້ເປັນກິ່ງຕົ້ນກອກເທດ
ປ່າມາຕໍ່ແທນກິ່ງເຫລົ່ານັ້ນ, ແລະໃຫ້ເຂົ້າຮ່ວມປະສານຮັບນ້ຳລ້ຽງອັນບໍລິບູນຈາກຮາກຕົ້ນກອກ
ນັ້ນ. 18ແລ້ວເຈົ້າກໍຢ່າອວດດີຕໍ່ກິ່ງເຫລົ່ານັ້ນ ຖ້າເຈົ້າອວດດີ ກໍບໍ່ແມ່ນວ່າເຈົ້າເປັນຜູ້ລ້ຽງຮາກ
ແຕ່ແມ່ນຮາກທີ່ລ້ຽງເຈົ້າ. 19ເຈົ້າຄົງຈະເວົ້າວ່າ, "ກິ່ງເຫລົ່ານັ້ນໄດ້ຊົງຫັກອອກເສຍ ກໍເພື່ອຈະໄດ້

ຊົງຕໍ່ຂ້ອຍໄວ້.” 20ກໍຖືກແລ້ວ ທີ່ເຂົາຖືກຊົງຫັກອອກກໍເພາະເຂົາບໍ່ເຊື່ອ ແຕ່ທີ່ເຈົ້າຢູ່ໄດ້ກໍເພາະ
ດ້ວຍຄວາມເຊື່ອຂອງເຈົ້າເທົ່ານັ້ນ ດັ່ງນັ້ນຢ່າຊູ່ຈອງຫອງແຕ່ຈົ່ງເປັນຜູ້ຢຳເກງ. 21ເພາະວ່າເມື່ອ
ພຣະເຈົ້າບໍ່ໄດ້ຊົງໂຜດກິ່ງເດີມເຫລົ່ານັ້ນ ພຣະອົງຈະບໍ່ຊົງໂຜດເຈົ້າເໝືອນກັນ. 22ດ້ວຍເຫດນັ້ນ
ຈົ່ງພິຈາລະນາເບິ່ງພຣະເມດຕາແລະຄວາມເຄັ່ງຄັດຂອງພຣະເຈົ້າ ຄືພຣະອົງຊົງເຄັ່ງຄັດກັບຄົນ
ເຫລົ່ານັ້ນທີ່ຫລົງຜິດໄປ ແຕ່ພຣະອົງຊົງພຣະເມດຕາເຈົ້າ ຖ້າວ່າເຈົ້າຕັ້ງໝັ້ນຢູ່ໃນຄວາມເມດຕາ
ນັ້ນຕໍ່ໄປ ບໍ່ດັ່ງນັ້ນພຣະເຈົ້າກໍຈະຊົງຫັກເຈົ້າອອກເໝືອນກັນ. 23ສ່ວນເຂົາທັງຫລາຍນັ້ນ ຖ້າ
ເຂົາບໍ່ດື້ດ້ານຢູ່ໃນຄວາມບໍ່ເຊື່ອຕໍ່ໄປ ເຂົາກໍຈະໄດ້ຮັບການຊົງຕໍ່ກິ່ງເຂົ້າໄດ້ໃໝ່ ເພາະວ່າພຣະ-
ເຈົ້າຊົງລິດອາດທີ່ຈະຊົງໂຜດໃຫ້ເຂົາຕໍ່ກິ່ງເຂົ້າອີກໄດ້. 24ດ້ວຍວ່າຖ້າພຣະເຈົ້າຊົງຕັດເຈົ້າອອກ
ຈາກຕົ້ນກອກປ່າ ທີ່ເປັນໄມ້ປ່າຕາມທຳມະຊາດ ແລະຊົງນຳມາຕໍ່ເຂົ້າກັບຕົ້ນກອກພັນດີ ຊຶ່ງຜິດ
ທຳມະຊາດຂອງມັນແລ້ວ ການທີ່ຈະເອົາກິ່ງເຫລົ່ານັ້ນທີ່ເປັນກິ່ງເດີມມາຕໍ່ເຂົ້າກັບຕົ້ນມັນເອງ ກໍ
ຈະງ່າຍກວ່ານັ້ນຫລາຍເທົ່າໃດໜໍ.

## ພຣະເຈົ້າຊົງພຣະເມດຕາແກ່ຄົນທັງປວງ

25ພີ່ນ້ອງທັງຫລາຍເອີຍ, ເຮົາຢ້ານວ່າພວກເຈົ້າຈະຖືຕົວເປັນຜູ້ສະຫລາດຮູ້ ຈຶ່ງຢາກໃຫ້ເຂົ້າ-
ໃຈຂໍ້ຄວາມອັນເລິກລັບນີ້ ຄື ເລື່ອງທີ່ບາງຄົນໃນພວກອິສຣາເອນມີໃຈແຂງກະດ້າງໄປພໍປານ
ໜຶ່ງ[ກ] ຈົນເຮັດໃຫ້ພວກຕ່າງຊາດມາຄົບຈຳນວນແລ້ວ. 26ແລະດັ່ງນັ້ນພວກອິສຣາເອນທັງໝົດ
ຈຶ່ງຈະໄດ້ພົ້ນ ດັ່ງມີຄຳຂຽນໃນພຣະຄຳພີວ່າ,

“ພຣະຜູ້ຊົງໂຜດໃຫ້ພົ້ນຈະສະດັດມາຈາກເມືອງຊີໂອນ
ພຣະອົງຈະຊົງລຶບລ້າງສິ່ງອະທຳໃຫ້ໝົດໄປຈາກຢາໂຄບ.
27 ແລະອັນນີ້ແຫລະ, ຈະເປັນຄຳສັນຍາຂອງເຮົາກັບເຂົາ
ເມື່ອເຮົາຍົກຄວາມຜິດບາບຂອງເຂົາແລ້ວ.”

28ຖ້າຈະວ່າຕາມຂ່າວປະເສີດ ເຂົາເຫລົ່ານັ້ນກໍເປັນສັດຕູຂອງພຣະເຈົ້າ ເພື່ອປະໂຫຍດຂອງ
ພວກເຈົ້າ ແຕ່ຖ້າຈະວ່າຕາມການຊົງເລືອກໄວ້ນັ້ນ ເຂົາກໍເປັນທີ່ຊົງຮັກເນື່ອງຈາກບັນພະບຸລຸດ
ຂອງເຂົາ. 29ເພາະວ່າພຣະເຈົ້າບໍ່ໄດ້ຊົງຫລົບພຣະໄທ ໃນການທີ່ໄດ້ຊົງໃຫ້ຂອງພຣະລາຊະ-
ທານແລະຊົງເລືອກໄວ້. 30ເຈົ້າທັງຫລາຍກໍເໝືອນກັນ ເມື່ອກ່ອນບໍ່ໄດ້ເຊື່ອຟັງພຣະເຈົ້າ ແຕ່ບັດ
ນີ້ໄດ້ຮັບພຣະເມດຕາ ເພາະຄວາມບໍ່ເຊື່ອຟັງຂອງເຂົາເຫລົ່ານັ້ນສັນໃດ. 31ບັດນີ້ເຂົາເຫລົ່ານັ້ນກໍ
ບໍ່ໄດ້ເຊື່ອຟັງ ເພື່ອວ່າເຂົາຈະໄດ້ຮັບພຣະກະລຸນາດ້ວຍພຣະຄຸນ ທີ່ໄດ້ຊົງໂຜດແກ່ເຈົ້າທັງຫລາຍ
ສັນນັ້ນ. 32ເພາະພຣະເຈົ້າໄດ້ຮວບຮວມຄົນທັງປວງໃຫ້ຢູ່ໃນຄວາມບໍ່ເຊື່ອຟັງ ເພື່ອຈະໄດ້ຊົງ
ເມດຕາແກ່ເຂົາທຸກຄົນ.

## ຄຳສັນລະເສີນຕໍ່ພຣະເຈົ້າ

33ໂອ ຊັບສົມບັດຂອງພຣະເຈົ້າມີຫລວງຫລາຍປານໃດໜໍ ພຣະປັນຍາທັງຄວາມຮອບຮູ້ຂອງ
ພຣະອົງເລິກລັບເທົ່າໃດ ຂໍ້ຕັດສິນຂອງພຣະອົງນັ້ນກໍເຫລືອທີ່ຈະຢັ່ງຮູ້ໄດ້ ແລະວິທີທາງຂອງ
ພຣະອົງກໍເຫລືອວິໄສທີ່ຈະຄົ້ນຄວ້າໄດ້.

[ກ]ຫລືວ່າ “ພຽງຊົ່ວຄາວ.”

[34] "ເພາະວ່າໃຜໜໍໄດ້ຮູ້ຈັກພຣະໄທຂອງ ພຣະເຈົ້າ
ຫລືໃຜໜໍເປັນທີ່ປຶກສາຂອງພຣະອົງ.
[35] ຫລືໃຜໜໍໄດ້ຖວາຍສິ່ງໜຶ່ງສິ່ງໃດແກ່ພຣະອົງກ່ອນ
ທີ່ພຣະອົງຈະຊົງປະທານຕອບແທນແກ່ຕົນ."

[36]ດ້ວຍວ່າສິ່ງສາລະພັດກໍເປັນມາຈາກພຣະອົງ, ດ້ວຍພຣະອົງ, ແລະເພື່ອພຣະອົງຂໍພຣະ
ກຽດຕິຍົດຈົ່ງມີແກ່ພຣະອົງສືບໆ ໄປເປັນນິດ ອາແມນ.

# ບົດທີ 12

## ດຳເນີນຊີວິດຕາມແບບການປະຕິບັດພຣະເຈົ້າ

[1]ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ, ໂດຍເຫັນແກ່ພຣະເມດຕາກະລຸນາຂອງ ພຣະເຈົ້າ ເຮົາ
ຈຶ່ງຊັກຊວນພວກເຈົ້າໃຫ້ຖວາຍຕົວແກ່ພຣະອົງ ເພື່ອເປັນເຄື່ອງບູຊາທີ່ມີຊີວິດ, ເປັນອັນບໍລິສຸດ,
ແລະເປັນທີ່ຊອບພຣະໄທ ພຣະເຈົ້າ ຊຶ່ງເປັນການນະມັດສະການທີ່ສົມກັບຝ່າຍວິນຍານຂອງເຈົ້າ
ທັງຫລາຍ. [2]ຢ່າດຳເນີນຊີວິດເໝືອນຢ່າງຊາວໂລກນີ້ ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈ ແລ້ວ
ອຸປະນິໄສຂອງພວກເຈົ້າຈຶ່ງຈະປ່ຽນໃໝ່ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ນ້ຳພຣະໄທຂອງ ພຣະເຈົ້າ
ຈະໄດ້ຮູ້ວ່າອັນໃດດີ ອັນໃດເປັນທີ່ຊອບພຣະໄທ ພຣະເຈົ້າ, ແລະອັນໃດດີທີ່ສຸດ.

[3]ເຮົາກ່າວແກ່ເຈົ້າທັງຫລາຍທຸກຄົນໂດຍພຣະຄຸນທີ່ຊົງປະທານແກ່ເຮົາແລ້ວວ່າ ຢ່າຄຶດຖືຕົວ
ເກີນທີ່ຕົນຄວນຈະຄຶດນັ້ນ ແຕ່ຈົ່ງຄຶດໃຫ້ພໍສົມກັບຂະໜາດແຫ່ງຄວາມເຊື່ອທີ່ ພຣະເຈົ້າ ໄດ້ຊົງ
ໂຜດປະທານໃຫ້ແກ່ທຸກຄົນ. [4]ເພາະວ່າໃນຮ່າງກາຍອັນດຽວນັ້ນເຮົາມີອະໄວຍະວະຫລາຍຢ່າງ
ແລະອະໄວຍະວະເຫລົ່ານັ້ນບໍ່ມີໜ້າທີ່ຢ່າງດຽວກັນສັນໃດ. [5]ພວກເຮົາຜູ້ເປັນຫລາຍຄົນກໍຍັງເປັນ
ຮ່າງກາຍອັນດຽວໃນ ພຣະຄຣິດ ແລະເປັນອະໄວຍະວະແກ່ກັນແລະກັນສັນນັ້ນ. [6]ແລະເຮົາທຸກ
ຄົນໄດ້ຮັບຂອງພຣະລາຊະທານຕ່າງໆ ກັນ ຕາມພຣະຄຸນທີ່ໄດ້ຊົງໂຜດປະທານແກ່ພວກເຮົາ ຄື
ຖ້າເປັນການປະກາດພຣະທຳ ກໍຈົ່ງປະກາດຕາມຂະໜາດແຫ່ງຄວາມເຊື່ອ. [7]ຖ້າເປັນການປະຕິ-
ບັດກໍຈົ່ງປະຕິບັດ ຖ້າເປັນການສັ່ງສອນກໍຈົ່ງສັ່ງສອນ. [8]ຖ້າເປັນການເຕືອນສະຕິກໍຈົ່ງເຕືອນ
ສະຕິ ຖ້າເປັນການບໍລິຈາກກໍຈົ່ງບໍລິຈາກດ້ວຍໃຈກວ້າງຂວາງ ຜູ້ຄຸ້ມຄອງກໍຈົ່ງຄຸ້ມຄອງດ້ວຍ
ເອົາໃຈໃສ່ ຜູ້ທີ່ສະແດງຄວາມເມດຕາກໍຈົ່ງສະແດງດ້ວຍໃຈຍິນດີ.

[9]ຈົ່ງຮັກດ້ວຍໃຈຈິງ ຈົ່ງກຽດຊັງສິ່ງຊົ່ວ ຈົ່ງຍຶດໝັ້ນໃນສິ່ງທີ່ດີ. [10]ຈົ່ງຮັກກັນເໝືອນສັນພີ່ນ້ອງ
ສ່ວນການທີ່ໃຫ້ກຽດແກ່ກັນແລະກັນນັ້ນຈົ່ງຖືວ່າຜູ້ອື່ນດີກວ່າຕົນ. [11]ຢ່າຂີ້ຄ້ານ ແຕ່ຈົ່ງເອົາໃຈໃສ່
ຈົ່ງມີຈິດໃຈຮ້ອນຮົນດ້ວຍ ພຣະວິນຍານ ຈົ່ງບົວລະບັດອົງ ພຣະຜູ້ເປັນເຈົ້າ. [12]ຈົ່ງຊົມຊື່ນຍິນດີ
ໃນຄວາມໄວ້ວາງໃຈ ຈົ່ງອົດທົນຕໍ່ຄວາມຍາກລຳບາກ ຈົ່ງໝັ່ນເອົາໃຈໃສ່ໃນການໄຫວ້ວອນ.
[13]ຈົ່ງຊ່ວຍໄພ່ພົນຂອງ ພຣະເຈົ້າ ເມື່ອເຂົາຂັດສົນ ຈົ່ງຕ້ອນຮັບແຂກດ້ວຍໃຈເຫລື້ອມໃສ. [14]ຈົ່ງ
ອວຍພອນແກ່ຄົນທີ່ຂົ່ມເຫງເຈົ້າ ຈົ່ງໃຫ້ພອນ ຢ່າປ້ອຍດ່າ. [15]ຈົ່ງຊົມຊື່ນຍິນດີກັບຜູ້ທີ່ມີຄວາມ
ຊົມຊື່ນຍິນດີ ຈົ່ງຮ້ອງໄຫ້ກັບຜູ້ທີ່ຮ້ອງໄຫ້. [16]ຈົ່ງເປັນນ້ຳໜຶ່ງໃຈດຽວກັນ ຢ່າຄຶດໃຫຍ່ໄຝ່ສູງ ແຕ່

ຈົ່ງຮັບຮູ້ຄົນສາມັນຕໍ່າຕ້ອຍ[ກ] ຢ່າຖືຕົວວ່າເປັນຜູ້ສະຫລາດ. 17ຢ່າເຮັດຊົ່ວຕອບແທນການຊົ່ວແກ່
ຜູ້ໜຶ່ງຜູ້ໃດ ແຕ່ຈົ່ງພະຍາຍາມເຮັດແຕ່ສິ່ງທີ່ທຸກຄົນເຫັນວ່າດີ. 18ຖ້າເປັນໄດ້ໃນເລື່ອງທີ່ເກີດຂຶ້ນຢູ່
ກັບພວກເຈົ້ານັ້ນ ຈົ່ງຢູ່ຢ່າງສະຫງົບສຸກກັບຄົນທັງປວງ. 19ພວກທີ່ຮັກຂອງເຮົາເອີຍ, ຢ່າແກ້-
ແຄ້ນ ແຕ່ຈົ່ງມອບການນັ້ນໄວ້ແກ່ພຣະພິໂລດ ດ້ວຍວ່າມີຄຳຂຽນໄວ້ໃນພຣະຄຳພີແລ້ວວ່າ, "ອົງ
ພຣະຜູ້ເປັນເຈົ້າ ຊົງກ່າວວ່າ, 'ການແກ້ແຄ້ນເປັນທຸລະຂອງເຮົາ ເຮົາເອງຈະເປັນຜູ້ຕອບແທນ'."
20ແຕ່ "ຖ້າສັດຕູຂອງເຈົ້າຢາກເຂົ້າ ຈົ່ງໃຫ້ເຂົາກິນ ຖ້າຢາກນໍ້າ ຈົ່ງໃຫ້ເຂົາດື່ມ ເພາະວ່າຖ້າເຮັດ
ດັ່ງນັ້ນ ເປັນການກອງຖ່ານໄຟແດງໃສ່ໄວ້ເທິງຫົວຂອງເຂົາ." 21ຢ່າໃຫ້ຄວາມຊົ່ວໄດ້ຊະນະເຈົ້າ
ແຕ່ຈົ່ງຊະນະຄວາມຊົ່ວດ້ວຍຄວາມດີ.

# ບົດທີ 13

## ຕ້ອງຍອມຢູ່ໃຕ້ອຳນາດຂອງຜູ້ປົກຄອງ

1ທຸກຄົນຈົ່ງຍອມຢູ່ໃຕ້ບັງຄັບຜູ້ມີອຳນາດປົກຄອງ ດ້ວຍວ່າບໍ່ມີອຳນາດອັນໃດທີ່ບໍ່ໄດ້ມາຈາກ
ພຣະເຈົ້າ ແລະຜູ້ມີອຳນາດນັ້ນກໍແມ່ນພຣະເຈົ້າ ຊົງແຕ່ງຕັ້ງຂຶ້ນ. 2ເຫດສັນນັ້ນຜູ້ທີ່ຂັດຂືນອຳ-
ນາດນັ້ນກໍຂັດຂືນຜູ້ຊຶ່ງພຣະເຈົ້າ ແຕ່ງຕັ້ງຂຶ້ນ ແລະຜູ້ທີ່ຂັດຂືນນັ້ນຈະຕ້ອງຖືກພິພາກສາລົງໂທດ.
3ເພາະວ່າຜູ້ປົກຄອງນັ້ນບໍ່ເປັນໜ້າຢ້ານສຳລັບຄົນທີ່ເຮັດການດີ ແຕ່ເປັນໜ້າຢ້ານສຳລັບຄົນທີ່
ເຮັດການຊົ່ວ ເຈົ້າບໍ່ຢາກຢ້ານຜູ້ມີອຳນາດຫລື ຖ້າດັ່ງນັ້ນ ຈົ່ງເຮັດແຕ່ການດີ ແລ້ວເຈົ້າກໍຈະໄດ້
ເປັນທີ່ພໍໃຈຂອງຜູ້ມີອຳນາດນັ້ນ. 4ເພາະວ່າຜູ້ປົກຄອງນັ້ນເປັນຜູ້ຮັບໃຊ້ຂອງພຣະເຈົ້າ ເພື່ອໃຫ້
ປະໂຫຍດແກ່ເຈົ້າ ແຕ່ວ່າຖ້າເຈົ້າເຮັດການຊົ່ວຈົ່ງຢ້ານ ເພາະວ່າຜູ້ປົກຄອງນັ້ນບໍ່ໄດ້ຖືດາບໄວ້
ຊື່ໆ ເພິ່ນເປັນຜູ້ຮັບໃຊ້ຂອງພຣະເຈົ້າ, ເປັນຜູ້ໃຊ້ຄວາມຮ້າຍຂາດແທນພຣະເຈົ້າ ແກ່ທຸກຄົນທີ່
ເຮັດການຊົ່ວ. 5ເຫດສັນນັ້ນເຈົ້າຈະຕ້ອງຢູ່ໃຕ້ບັງຄັບບັນຊາ ບໍ່ໃຊ່ເພາະເຫັນແກ່ຄວາມຮ້າຍຂາດ
ແຕ່ສິ່ງດຽວ ແຕ່ເພາະໃຈສຳນຶກຜິດແລະຊອບດ້ວຍ. 6ເພາະເຫດຜົນຢ່າງດຽວກັນນັ້ນເຈົ້າຈຶ່ງໄດ້
ຊ່ອຍເສຍສາອາກອນ ດ້ວຍວ່າຜູ້ມີອຳນາດນັ້ນເປັນຜູ້ຮັບໃຊ້ຂອງພຣະເຈົ້າ ແລະປະຕິບັດໜ້າທີ່ນີ້
ຢູ່. 7ເຈົ້າຈົ່ງໃຫ້ແກ່ທຸກຄົນຕາມທີ່ເຂົາຄວນຈະໄດ້ຮັບ ສ່ວຍສາອາກອນຄວນໃຫ້ຜູ້ໃດຈົ່ງໃຫ້ແກ່ຜູ້
ນັ້ນ ພາສີຄວນເສຍໃຫ້ຜູ້ໃດຈົ່ງໃຫ້ແກ່ຜູ້ນັ້ນ ຄວາມຢຳເກງຄວນໃຫ້ແກ່ຜູ້ໃດຈົ່ງໃຫ້ແກ່ຜູ້ນັ້ນ
ກຽດຕິຍົດຄວນມີແກ່ຜູ້ໃດຈົ່ງໃຫ້ແກ່ຜູ້ນັ້ນ.

## ການປະຕິບັດຊຶ່ງກັນແລະກັນ

8ຢ່າເປັນໜີ້ສິ່ງໃດແກ່ໃຜນອກຈາກຄວາມຮັກຊຶ່ງມີຕໍ່ກັນ ເພາະວ່າຜູ້ທີ່ຮັກເພື່ອນມະນຸດກໍປະ-
ຕິບັດຕາມພຣະບັນຍັດຢ່າງຄົບຖ້ວນແລ້ວ. 9ເພາະວ່າຂໍ້ບັນຍັດທີ່ກ່າວວ່າ, "ຢ່າຫລິ້ນຊູ້, ຢ່າຂ້າ
ຄົນ, ຢ່າລັກຊັບ, ຢ່າໂລບ" ທັງບັນຍັດຂໍ້ອື່ນໆ ກໍຮ່ວມຢູ່ໃນຂໍ້ນີ້ ຄື "ຈົ່ງຮັກເພື່ອນບ້ານເໝືອນ
ຮັກຕົນເອງ." 10ຄວາມຮັກບໍ່ເຮັດອັນຕະລາຍແກ່ເພື່ອນບ້ານ ເຫດສັນນັ້ນຄວາມຮັກຈຶ່ງເປັນການ
ປະຕິບັດຕາມຂໍ້ບັນຍັດຢ່າງຄົບຖ້ວນ.

11ທີ່ຄວນຈະເຮັດດັ່ງນີ້ກໍເພາະພວກເຈົ້າໄດ້ຮູ້ຈັກກາລະເວລາແລ້ວວ່າ ບັດນີ້ເປັນເວລາທີ່ເຈົ້າ

---

[ກ]ຫລືວ່າ "ຈົ່ງຖ່ອມໃຈລົງຍອມເຮັດການຕໍ່າ."

ຄວນຈະຕື່ນຈາກຫລັບແລ້ວ ດ້ວຍວ່າເວລາທີ່ພວກເຮົາຈະພົ້ນນັ້ນໃກ້ກວ່າເວລາທີ່ເຮົາຫາກໍເຊື່ອ
ນັ້ນ. [12]ກາງຄືນກໍລ່ວງໄປຫລາຍແລ້ວ ແລະຮຸ່ງເຊົ້າກໍໃກ້ເຂົ້າມາ ເຫດສັນນັ້ນພວກເຮົາຈຶ່ງເລີກ
ເຮັດການຝ່າຍຄວາມມືດ ແລະຈົ່ງປະກອບຕົວດ້ວຍອາວຸດແຫ່ງຄວາມສະຫວ່າງ. [13]ພວກເຮົາຈົ່ງ
ປະຕິບັດຕົວໃຫ້ເໝາະສົມກັບເວລາກາງເວັນ ບໍ່ແມ່ນໃນການລ້ຽງດ້ວຍເສບສຸລາຢາເມົາ ບໍ່ແມ່ນ
ໃນການວິວາດເຫິງສາກັນ. [14]ແຕ່ຈົ່ງປະດັບຕົວດ້ວຍພຣະເຢຊູຄຣິດເຈົ້າ ແລະຢ່າຈັດຫາອັນໃດ
ເພື່ອບຳລຸງຕັນຫາຂອງເນື້ອກາຍ.

# ບົດທີ 14

## ຢ່າກ່າວໂທດໃສ່ພີ່ນ້ອງ

[1]ສ່ວນຄົນທີ່ອ່ອນໃນຄວາມເຊື່ອນັ້ນ ຈົ່ງຮັບເຂົາໄວ້ ແຕ່ບໍ່ໃຊ່ເພື່ອຖົກຖຽງກັນໃນເລື່ອງຄວາມ
ເຊື່ອທີ່ແຕກຕ່າງກັນ. [2]ຄົນໜຶ່ງຖືວ່າຈະກິນອັນໃດກໍໄດ້ໝົດ ແຕ່ຄົນທີ່ຍັງອ່ອນໃນຄວາມເຊື່ອກໍ
ກິນແຕ່ຜັກເທົ່ານັ້ນ. [3]ຢ່າໃຫ້ຄົນທີ່ກິນນັ້ນໝິ່ນປະໝາດຄົນທີ່ບໍ່ກິນ ແລະຢ່າໃຫ້ຄົນທີ່ບໍ່ກິນກ່າວ
ໂທດໃສ່ຄົນທີ່ກິນ ດ້ວຍວ່າພຣະເຈົ້າໄດ້ຊົງໂຜດຮັບເອົາຜູ້ນັ້ນແລ້ວ. [4]ເຈົ້ານັ້ນເປັນໃຜຈຶ່ງກ່າວ
ໂທດໃສ່ບ່າວຂອງຜູ້ອື່ນ ບ່າວນັ້ນຈະຕັ້ງໝັ້ນຢູ່ຫລືລົ້ມລົງກໍສຸດແລ້ວແຕ່ນາຍຂອງຕົນ ແລະລາວ
ຄົງຈະຕັ້ງໝັ້ນຄົງຢູ່ເປັນແນ່ ດ້ວຍວ່າອົງພຣະຜູ້ເປັນເຈົ້າຊົງລິດອາດໃຫ້ຜູ້ນັ້ນຕັ້ງໝັ້ນຄົງຢູ່ໄດ້.
[5]ຄົນໜຶ່ງຖືວ່າວັນໜຶ່ງດີກວ່າອີກວັນໜຶ່ງ ແຕ່ອີກຄົນໜຶ່ງຖືວ່າທຸກວັນເໝືອນກັນ ຄວນໃຫ້ທຸກ
ຄົນມີຄວາມແນ່ໃຈໃນຄວາມຄິດເຫັນຂອງຕົນເອງ. [6]ຜູ້ທີ່ຖືວັນກໍຖືດ້ວຍເຫັນແກ່ອົງພຣະຜູ້ເປັນ-
ເຈົ້າ ຜູ້ທີ່ກິນກໍກິນດ້ວຍເຫັນແກ່ອົງພຣະຜູ້ເປັນເຈົ້າ ເພາະວ່າເພິ່ນໄດ້ຂອບພຣະຄຸນພຣະເຈົ້າ
ແລະຜູ້ທີ່ບໍ່ໄດ້ກິນຈຶ່ງບໍ່ໄດ້ກິນດ້ວຍເຫັນແກ່ອົງພຣະຜູ້ເປັນເຈົ້າ ແລະຍັງຂອບພຣະຄຸນພຣະອົງ.
[7]ໃນພວກເຮົາບໍ່ມີຜູ້ໃດມີຊີວິດຢູ່ເພື່ອຕົນເອງຝ່າຍດຽວ ແລະບໍ່ມີຜູ້ໃດຕາຍເພື່ອຕົນເອງຝ່າຍດຽວ
ດ້ວຍວ່າຖ້າເຮົາທັງຫລາຍມີຊີວິດຢູ່ກໍເພື່ອອົງພຣະຜູ້ເປັນເຈົ້າ. [8]ແລະຖ້າເຮົາຕາຍກໍຕາຍເພື່ອອົງ
ພຣະຜູ້ເປັນເຈົ້າ ເຫດສັນນັ້ນຖ້າເຮົາທັງຫລາຍມີຊີວິດຫລືຕາຍກໍດີ ເຮົາກໍເປັນຄົນຂອງອົງພຣະ-
ຜູ້ເປັນເຈົ້າ. [9]ເພາະເຫດນີ້ແຫລະ, ພຣະຄຣິດຈຶ່ງໄດ້ສິ້ນພຣະຊົນແລະໄດ້ຄືນພຣະຊົນອີກ ເພື່ອ
ຈະໄດ້ຊົງເປັນອົງພຣະຜູ້ເປັນເຈົ້າຂອງຄົນຕາຍແລະຂອງຄົນເປັນ.
[10]ແຕ່ຕົວເຈົ້າເດ, ເຫດໃດເຈົ້າຈຶ່ງກ່າວໂທດໃສ່ພີ່ນ້ອງຂອງຕົນ ຫລືເຈົ້າຜູ້ເປັນອີກຝ່າຍໜຶ່ງ,
ເຫດໃດເຈົ້າໝິ່ນປະໝາດພີ່ນ້ອງຂອງຕົນ ດ້ວຍວ່າເຮົາທຸກຄົນຕ້ອງຢືນຢູ່ໜ້າບັນລັງພິພາກສາ
ຂອງພຣະເຈົ້າ. [11]ເພາະມີຄຳຂຽນໄວ້ໃນພຣະຄຳພີແລ້ວວ່າ, "ອົງພຣະຜູ້ເປັນເຈົ້າໄດ້ຊົງກ່າວໄວ້
ວ່າ ເຮົາມີຊີວິດຢູ່ທ່ຽງແທ້ສັນໃດ ທຸກຄົນຈະຄຸເຂົ່າລົງຂາບໄຫວ້ເຮົາ ແລະທຸກສິ່ງຈະສັນລະເສີນ
ພຣະເຈົ້າ'." [12]ດັ່ງນັ້ນເຮົາທຸກຄົນຈະຕ້ອງກາບທູນເລື່ອງລາວຂອງຕົນເອງຕໍ່ພຣະເຈົ້າ.

## ຢ່າໃຫ້ພີ່ນ້ອງຂອງຕົນຊູນສະດຸດ

[13]ເຫດສັນນັ້ນພວກເຮົາຢ່າກ່າວໂທດໃສ່ກັນແລະກັນອີກຕໍ່ໄປ ແຕ່ວ່າຈົ່ງຕັ້ງໃຈເຮັດດັ່ງນີ້ດີກ
ວ່າ ຄື ຢ່າເອົາສິ່ງເປັນເຫດໃຫ້ຊູນສະດຸດຫລືລົ້ມລົງມາຂວາງທາງຂອງພີ່ນ້ອງ. [14]ເຮົາຮູ້ແລະ
ເຊື່ອແນ່ໃນໃຈພຣະເຢຊູເຈົ້າວ່າ ບໍ່ມີສິ່ງໜຶ່ງສິ່ງໃດເປັນຂອງຕ້ອງຫ້າມໃນຕົວມັນເອງ ແຕ່ຖ້າຜູ້

ໜຶ່ງຜູ້ໃດຖືວ່າສິ່ງໃດເປັນຂອງຕ້ອງຫ້າມ ມັນກໍເປັນຂອງຕ້ອງຫ້າມສຳລັບຜູ້ນັ້ນແທ້. 15ຖ້າພີ່ນ້ອງ
ຂອງ ເຈົ້າ ເປັນທຸກໃຈ ເພາະອາຫານທີ່ ເຈົ້າກິນ ເຈົ້າກໍບໍ່ ໄດ້ປະຕິບັດໄປຕາມທາງ ແຫ່ງຄວາມຮັກ
ເສຍແລ້ວ ພຣະຄຣິດ ຊົງສິ້ນພຣະຊົນເພື່ອຜູ້ໃດ ກໍຢ່າໃຫ້ຜູ້ນັ້ນຈິບຫາຍ ເພາະອາຫານທີ່ເຈົ້າກິນ
ນັ້ນ, ສັນນັ້ນຢ່າໃຫ້ການທີ່ເຈົ້າຖືວ່າດີນັ້ນ ເປັນຂໍ້ທີ່ຄົນອື່ນຕິຕຽນໄດ້. 16ເພາະວ່າລາຊະອານາຈັກ
ຂອງ ພຣະເຈົ້າ ບໍ່ແມ່ນໝາຍເຖິງການກິນແລະການດື່ມ. 17ແຕ່ໝາຍເຖິງຄວາມຊອບທຳແລະສັນ-
ຕິສຸກ ກັບຄວາມຊົມຊື່ນຍິນດີທີ່ມາຈາກ ພຣະວິນຍານບໍລິສຸດ. 18ຜູ້ທີ່ບົວລະບັດ ພຣະຄຣິດ ໃນ
ການເຫລົ່ານັ້ນ ກໍເປັນທີ່ພໍພຣະໄທ ພຣະເຈົ້າ ແລະເປັນທີ່ຊອບໃຈມະນຸດດ້ວຍ.

19ເຫດດັ່ງນີ້ພວກເຮົາຈົ່ງສະແຫວງຫາສິ່ງທັງຫລາຍທີ່ເຮັດໃຫ້ເກີດຄວາມສະຫງົບສຸກ ແລະ
ເຮັດໃຫ້ເກີດຄວາມຈະເລີນ ແກ່ກັນ ແລະກັນ. 20ຢ່າທຳລາຍງານຂອງ ພຣະເຈົ້າ ຍ້ອນ ເລື່ອງອາ-
ຫານ ອາຫານທຸກຢ່າງບໍ່ແມ່ນຂອງຕ້ອງຫ້າມກໍຈິງ ແຕ່ຄົນໃດທີ່ກິນອາຫານຊຶ່ງເປັນເຫດໃຫ້ຜູ້ອື່ນ
ສະດຸດໃຈກໍມີຄວາມຜິດ. 21ທີ່ຈະບໍ່ກິນຊີ້ນ, ຫລືດື່ມເຫລົ້າແວງ, ຫລືເຮັດສິ່ງໃດໆ ທີ່ເປັນເຫດ
ໃຫ້ພີ່ນ້ອງສະດຸດ ໃຈກໍ ເປັນການດີຢູ່ ແລ້ວ. 22ຄວາມ ເຊື່ອທີ່ ເຈົ້າມີຢູ່ນັ້ນຈົ່ງຍຶດຖືໄວ້ໃຫ້ໝັ້ນລະ-
ຫວ່າງຕົວເຈົ້າກັບ ພຣະເຈົ້າ ຜູ້ໃດບໍ່ມີເຫດຈະຕິຕຽນຕົນເອງໃນສິ່ງທີ່ຕົນເຫັນຊອບແລ້ວນັ້ນກໍເປັນ
ສຸກ. 23ແຕ່ຜູ້ທີ່ມີຄວາມສົງໄສ ຖ້າຍັງກິນກໍຖືວ່າມີຜິດ ເພາະຜູ້ນັ້ນບໍ່ໄດ້ກິນຕາມທີ່ຕົນເຊື່ອ ທັງນີ້
ກໍເພາະການກະທຳທີ່ບໍ່ໄດ້ເກີດຈາກຄວາມເຊື່ອໝັ້ນກໍເປັນບາບທັງໝົດ.

# ບົດທີ 15

## ຈົ່ງໃຫ້ເປັນທີ່ພໍໃຈຂອງຄົນອື່ນບໍ່ໃຊ່ຂອງຕົນເອງ

1ຝ່າຍເຮົາທັງຫລາຍທີ່ມີຄວາມເຊື່ອເຂັ້ມແຂງ ຄວນອົດທົນຕໍ່ຄົນທີ່ມີຄວາມເຊື່ອຢຸດໆ ຍ່ອນໆ
ແລະບໍ່ຄວນເຮັດຕາມຊອບໃຈຂອງຕົນເອງ. 2ເຮົາທຸກຄົນຈົ່ງເຮັດໃຫ້ເພື່ອນບ້ານຊອບໃຈ ເພື່ອ
ນຳປະໂຫຍດ ແລະຄວາມຈະເລີນມາສູ່ ເຂົາ. 3ເພາະວ່າ ພຣະຄຣິດ ບໍ່ ໄດ້ ເຮັດສິ່ງທີ່ຊອບພຣະໄທ
ພຣະອົງ ຕາມທີ່ມີພຣະຄຳຂຽນໄວ້ໃນພຣະຄຳພີວ່າ, "ຄຳກ່າວຫຍາບຊ້າຂອງພວກຄົນທີ່ນິນທາ
ພຣະອົງເຈົ້າ ກໍໄດ້ຕົກຖືກຂ້າພຣະອົງ." 4ດ້ວຍວ່າທຸກສິ່ງທີ່ຂຽນໄວ້ໃນສະໄໝກ່ອນນັ້ນ ກໍຂຽນ
ໄວ້ເພື່ອສັ່ງສອນພວກເຮົາ ເພື່ອເຮົາຈະໄດ້ມີຄວາມຫວັງ ໂດຍຄວາມພຽນ ແລະຄວາມຊ່ອຍຊູໃຈ
ດ້ວຍທາງພຣະຄຳພີນັ້ນ. 5ຂໍໃຫ້ພຣະເຈົ້າຜູ້ຊົງປະທານຄວາມພຽນແລະຄວາມຊ່ອຍຊູໃຈນັ້ນ ຊົງ
ໂຜດປະທານໃຫ້ເຈົ້າທັງຫລາຍມີນ້ຳໜຶ່ງໃຈດຽວກັນຕາມຢ່າງ ພຣະເຢຊູຄຣິດ. 6ເພື່ອພວກເຈົ້າຈະ
ໄດ້ພ້ອມໃຈກັນສັນລະເສີນ ພຣະເຈົ້າ ຜູ້ຊົງ ເປັນ ພຣະບິດາ ຂອງ ພຣະເຢຊູຄຣິດ ເຈົ້າຂອງ ເຮົາ
ທັງຫລາຍ.

## ຂ່າວປະເສີດທີ່ໄປເຖິງຄົນຕ່າງຊາດ

7ເຫດສັນນັ້ນຈົ່ງຕ້ອນຮັບ ເຊິ່ງກັນ ແລະກັນ ເໝືອນຢ່າງ ພຣະຄຣິດ ໄດ້ຊົງຕ້ອນຮັບພວກເຈົ້າ
ເພື່ອເປັນພຣະກຽດຕິຍົດ ແກ່ ພຣະເຈົ້າ. 8ເພາະເຮົາຖືວ່າ ພຣະຄຣິດ ໄດ້ຊົງ ເກີດເປັນຜູ້ຮັບໃຊ້ພວກ
ທີ່ຖືພິທີຕັດ[ກ] ເພື່ອສະແດງຄວາມສັດຈິງຂອງ ພຣະເຈົ້າ, ເພື່ອຈະໃຫ້ຂໍ້ຄວາມທີ່ຊົງສັນຍາໄວ້ແກ່

[ກ]ຄືຊາວຢິວ. [ຂ]ຄວາມເດີມອາດຈະແປໄດ້ວ່າ "ເຄື່ອງບູຊາທີ່ພວກຕ່າງຊາດຖວາຍ" ຫລືວ່າ "ເຄື່ອງບູຊາຄື

ພວກບັນພະບຸລຸດນັ້ນ ຍັ້ງຍືນໝັ້ນຄົງຢູ່. [9]ແລະເພື່ອຄົນຕ່າງຊາດຈະໄດ້ຖວາຍພຣະກຽດແກ່
ພຣະເຈົ້າ ເພາະພຣະເມດຕາຂອງພຣະອົງ ຕາມທີ່ມີຄຳຂຽນໄວ້ໃນພຣະຄຳພີແລ້ວວ່າ, "ເພາະ
ເຫດນີ້ຂ້າພຣະອົງຈຶ່ງຈະສັນລະເສີນພຣະອົງໃນຖ້າມກາງປະຊາຊາດທັງຫລາຍແລະຈະຮ້ອງເພງ
ສັນລະເສີນພຣະນາມຂອງພຣະອົງ." [10]ແລະມີຄຳກ່າວອີກວ່າ, "ປະຊາຊາດທັງຫລາຍເອີຍ, ຈົ່ງ
ຊົມຊື່ນຍິນດີດ້ວຍກັນກັບໄພ່ພົນຂອງພຣະອົງ." [11]ແລ້ວຍັງມີຄຳກ່າວອີກວ່າ, "ປະຊາຊາດທັງ
ປວງເອີຍ, ຈົ່ງສັນລະເສີນອົງພຣະຜູ້ເປັນເຈົ້າ ແລະໃຫ້ບັນດາໄພ່ພົນທັງຫລາຍຍ້ອງຍໍສັລະເສີນ
ພຣະອົງ." [12]ແລະ ເອຊາຢາກໍກ່າວອີກວ່າ, "ຈະມີໜໍ່ແນວອອກມາຈາກ ເຢຊີຄື ຜູ້ຈະຊົງບັງເກີດ
ມາຄຸ້ມຄອງປະຊາຊາດທັງຫລາຍປະຊາຊາດທັງຫລາຍຈະໄວ້ວາງໃຈໃນພຣະອົງ." [13]ຂໍ ພຣະ-
ເຈົ້າຊົງໂຜດປະທານຄວາມໄວ້ວາງໃຈ ຊົງໂຜດໃຫ້ເຈົ້າທັງຫລາຍບໍລິບູນດ້ວຍຄວາມຊົມຊື່ນຍິນ-
ດີແລະຄວາມສຸກໃນຄວາມເຊື່ອ ເພື່ອເຈົ້າຈະໄດ້ເຕັມລົ້ນດ້ວຍຄວາມໄວ້ວາງໃຈ ໂດຍລິດເດດ
ຂອງ ພຣະວິນຍານບໍລິສຸດ.

## ເຫດຜົນທີ່ກ້າແຕ່ງຈົດໝາຍ

[14]ພີ່ນ້ອງທັງຫລາຍຂອງເຮົາເອີຍ, ເຮົາເຊື່ອແນ່ວ່າພວກເຈົ້າບໍລິບູນດ້ວຍຄວາມດີແລະພ້ອມ
ດ້ວຍຄວາມຮູ້ທຸກຢ່າງ, ສາມາດຈະເຕືອນສະຕິກັນແລະກັນໄດ້. [15]ແຕ່ທີ່ເຮົາຂຽນບາງຢ່າງມາ
ເຖິງພວກເຈົ້າ ເພື່ອເຕືອນຄວາມຈື່ຈຳຂອງພວກເຈົ້າ ກໍເພາະເຫດຂອງພຣະລາຊະທານດ້ວຍ
ພຣະຄຸນຂອງ ພຣະເຈົ້າ ຊຶ່ງໄດ້ຊົງໂຜດປະທານແກ່ເຮົາ. [16]ເພື່ອໃຫ້ເຮົາເປັນຜູ້ຮັບໃຊ້ຂອງ ພຣະ-
ເຢຊູຄຣິດ ໄປຍັງຄົນຕ່າງຊາດ[ຂ] ໃນໜ້າທີ່ເປັນປະໂລຫິດຝ່າຍຂ່າວປະເສີດຂອງ ພຣະເຈົ້າ ເພື່ອ
ການຖວາຍຂອງພວກຕ່າງຊາດທັງຫລາຍນັ້ນຈະເປັນທີ່ຊອບພຣະໄທ ຄືເປັນທີ່ຊຳລະໄວ້ດ້ວຍ
ພຣະວິນຍານບໍລິສຸດ.

[17]ເຫດສັນນັ້ນໃນ ພຣະເຢຊູຄຣິດ ເຮົາມີສິ່ງທີ່ຈະອວດອ້າງໄດ້ ຝ່າຍການປະຕິບັດ ພຣະເຈົ້າ.
[18]ດ້ວຍວ່າເຮົາບໍ່ອາດຈະອ້າງສິ່ງໃດນອກຈາກສິ່ງຊຶ່ງ ພຣະຄຣິດ ໄດ້ຊົງກະທຳໂດຍຊົງໃຊ້ເຮົາ
ທາງຄຳສອນແລະກິດຈະການເພື່ອຈະໃຫ້ຄົນຕ່າງຊາດເຊື່ອຟັງ. [19]ຄືດ້ວຍອິດທິລິດແຫ່ງໝາຍ
ສຳຄັນແລະການອັດສະຈັນ ໂດຍລິດເດດຂອງ ພຣະວິນຍານ ຈົນເຮົາໄດ້ປະກາດຂ່າວປະເສີດ
ເລື່ອງ ພຣະຄຣິດຢ່າງຄົບຖ້ວນ ຕັ້ງແຕ່ກຸງ ເຢຣູຊາເລັມ ອ້ອມໄປຍັງແຂວງ ອິລີຣິກົນ. [20]ສັນນັ້ນ
ເຮົາຈຶ່ງຕັ້ງເປົ້າໝາຍໄວ້ຢ່າງນີ້ວ່າ ຈະປະກາດຂ່າວປະເສີດໃນບ່ອນທີ່ຍັງບໍ່ມີຜູ້ໃດເຄີຍໄດ້ອອກ
ພຣະນາມຂອງ ພຣະຄຣິດ ເພື່ອເຮົາຈະບໍ່ໄດ້ກໍ່ຂຶ້ນເທິງຮາກຖານທີ່ຄົນອື່ນໄດ້ວາງໄວ້ກ່ອນແລ້ວ.
[21]ຕາມທີ່ມີຄຳຂຽນໄວ້ໃນພຣະຄຳພີວ່າ, "ຄົນທີ່ບໍ່ເຄີຍໄດ້ຮັບຄຳບອກເຖິງເລື່ອງພຣະອົງກໍຈະໄດ້
ເຫັນແລະຄົນທີ່ບໍ່ເຄີຍໄດ້ຟັງກໍຈະໄດ້ເຂົ້າໃຈ."

## ໂປໂລຕັ້ງໃຈຈະໄປກຸງໂຣມ

[22]ນີ້ຄືເຫດທີ່ຂັດຂວາງເຮົາຫລາຍເທື່ອຫ້າມບໍ່ໃຫ້ເຮົາມາຫາເຈົ້າທັງຫລາຍ. [23]ແຕ່ດຽວນີ້ບໍ່ມີກິດ
ທຸລະທີ່ຈະຕ້ອງຢູ່ໃນເຂດເຫລົ່ານີ້ຕໍ່ໄປ ເຮົາມີຄວາມປາດຖະໜາຫລາຍປີມາແລ້ວທີ່ຈະມາຫາ

---

ພວກຕ່າງຊາດເອງ."

ພວກເຈົ້າ. 24ເມື່ອເຮົາຈະໄປປະເທດສະເປນ ເພາະເຮົາຫວັງວ່າຂະນະທີ່ໄປຕາມທາງນັ້ນຈະໄດ້
ພົບພວກເຈົ້າ ແລະເມື່ອໄດ້ຮັບຄວາມຊື່ນໃຈກັບພວກເຈົ້າຈັກຫວ່າງແລ້ວ ກໍຫວັງວ່າພວກເຈົ້າຈະ
ຊ່ອຍຈັດສິ່ງໃຫ້ເຮົາເດີນທາງຕໍ່ໄປ.

25ແຕ່ປັດຈຸບັນນີ້ເຮົາກຳລັງຂຶ້ນເມືອກຸງເຢຣູຊາເລັມ ເພື່ອຊ່ອຍສົງເຄາະພວກໄພ່ພົນຂອງ
ພຣະເຈົ້າ. 26ດ້ວຍວ່າພວກສິດໃນແຂວງມາເກໂດເນຍ ແລະແຂວງອະຂາຢາ ໄດ້ເຫັນຊອບຈະ
ເຂົ້າສ່ວນບໍລິຈາກຊັບ ເພື່ອຈັດຝາກໄປຊ່ອຍພວກໄພ່ພົນທີ່ທຸກຍາກໃນກຸງເຢຣູຊາເລັມ. 27ພວກ
ສິດເຫລົ່ານັ້ນກໍພໍໃຈທີ່ຈະເຮັດຢ່າງນັ້ນ ແລະທີ່ຈິງພວກເຂົາກໍເປັນໜີ້ພວກໄພ່ພົນເຫລົ່ານັ້ນດ້ວຍ
ເພາະວ່າຖ້າເຂົາໄດ້ຮັບຄົນຕ່າງຊາດເຂົ້າສ່ວນໃນການຝ່າຍວິນຍານຈິດ ກໍເປັນການສົມຄວນທີ່
ພວກຕ່າງຊາດນັ້ນຈະໄດ້ຊ່ອຍອຸປະຖຳສິດເຫລົ່ານັ້ນດ້ວຍສິ່ງຂອງຝ່າຍເນື້ອກາຍ. 28ສັນນັ້ນເມື່ອ
ເຮົາສຳເລັດການມອບຜົນທານນີ້ໃຫ້ແກ່ເຂົາແລ້ວ ເຮົາກໍຈະໄປປະເທດສະເປນໂດຍຜ່ານເຂດທີ່
ພວກເຈົ້າຢູ່ນັ້ນ. 29ແລະເຮົາຮູ້ແນ່ວ່າ ເມື່ອເຮົາມາຫາເຈົ້າທັງຫລາຍນັ້ນ ເຮົາຈະມາພ້ອມດ້ວຍ
ພຣະພອນອັນບໍລິບູນຂອງພຣະຄຣິດ.

30ພີ່ນ້ອງທັງຫລາຍເອີຍ, ດ້ວຍເຫັນແກ່ພຣະເຢຊູຄຣິດເຈົ້າຂອງພວກເຮົາ, ແລະດ້ວຍເຫັນ-
ແກ່ຄວາມຮັກອັນຊົງນຳມາດ້ວຍພຣະວິນຍານ ເຮົາອ້ອນວອນຂໍໃຫ້ພວກເຈົ້າຊ່ອຍໄຫວ້ວອນ
ພຣະເຈົ້າດ້ວຍການຕໍ່ສູ້ເພື່ອເຮົາ. 31ເພື່ອໃຫ້ເຮົາພົ້ນຈາກມືຂອງພວກຄົນທີ່ບໍ່ເຊື່ອໃນແຂວງຢູ-
ດາຍ ແລະເພື່ອໃຫ້ການປະຕິບັດເນື່ອງດ້ວຍຜົນທານຊຶ່ງເຮົາໄດ້ນຳໄປຍັງຍັງກຸງເຢຣູຊາເລັມນັ້ນ
ຈະເປັນທີ່ພໍໃຈແກ່ພວກໄພ່ພົນຂອງພຣະເຈົ້າ. 32ທັງເພື່ອເຮົາຈະໄດ້ມາຫາພວກເຈົ້າ ຕາມຊອບ
ພຣະໄທພຣະເຈົ້າດ້ວຍຄວາມຊົມຊື່ນຍິນດີແລະມີຄວາມເບີກບານສຳລານໃຈ ເມື່ອໄດ້ພົບພວກ
ເຈົ້າ. 33ຂໍພຣະເຈົ້າຜູ້ຊົງໂຜດສັນຕິສຸກ ຈົ່ງສະຖິດຢູ່ກັບເຈົ້າທັງຫລາຍເທີ້ນ ອາແມນ.

# ບົດທີ 16

## ຄຳສະແດງຄວາມນັບຖືສ່ວນຕົວ

1ເຮົາຂໍຝາກນ້ອງສາວຂອງເຮົາໄວ້ກັບພວກເຈົ້າ ຄື ຟອຍເບ ຜູ້ຮັບໃຊ້ບົວລະບັດຄຣິສຕະຈັກ
ທີ່ຢູ່ເມືອງເກັນເຂອາຍ. 2ຂໍພວກເຈົ້າຈົ່ງຮັບນາງໄວ້ໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ ຕາມ
ສົມຄວນແກ່ໄພ່ພົນຂອງພຣະເຈົ້າ ແລະຂໍໃຫ້ພວກເຈົ້າຊ່ອຍນາງໃນທຸກສິ່ງທີ່ນາງຕ້ອງການ
ເພາະນາງໄດ້ຊ່ອຍສົງເຄາະຫລາຍຄົນຮ່ວມທັງເຮົາດ້ວຍ.

3ຂໍຝາກຄວາມຄິດເຖິງມາຍັງນາງປີຊະກາ ແລະທ່ານອາກີລາ ຜູ້ຮ່ວມງານກັບເຮົາໃນພຣະ-
ລາຊະກິດຂອງພຣະເຢຊູຄຣິດ. 4ຊຶ່ງໄດ້ສ່ຽງຊີວິດຂອງເຂົາເພື່ອປ້ອງກັນຊີວິດຂອງເຮົາ ເຮົາຂໍ
ຂອບຄຸນເຂົາທັງສອງ ແລະບໍ່ໃຊ່ແຕ່ເຮົາຜູ້ດຽວ ແຕ່ຄຣິສຕະຈັກທຸກບ່ອນຂອງພວກຕ່າງຊາດກໍ
ຂອບຄຸນເຂົາດ້ວຍ. 5ຂໍຝາກຄວາມຄິດເຖິງມາຍັງຄຣິສຕະຈັກທີ່ຮ່ວມປະຊຸມໃນເຮືອນຂອງເຂົາ
ເໝືອນກັນ. ຂໍຝາກຄວາມຄິດເຖິງມາຍັງທ່ານເອປາຍເນດເພື່ອນທີ່ຮັກຂອງເຮົາ ຜູ້ເປັນຄົນແຮກ
ຝ່າຍພຣະຄຣິດ[ກ] ໃນເຂດແຂວງອາເຊຍ. 6ຂໍຝາກຄວາມຄິດເຖິງມາຍັງນາງມາຣີອາ ຜູ້ໄດ້

[ກ]ຄືຄົນແຮກທີ່ເຂົ້າມາເຊື່ອໃນພຣະເຢຊູຄຣິດ. [ຂ]ຄືວ່າ ການຈູບອັນມີຢູ່ລະຫວ່າງໄພ່ພົນຂອງພຣະເຈົ້າ.

ເຮັດການຍາກໜັກຫລາຍປະການສຳລັບພວກເຈົ້າ. 7ຂໍຝາກຄວາມຄິດເຖິງມາຍັງທ່ານ ອັນດາ-
ໂຣນິໂກ ກັບນາງ ຢູເນຍ ເພື່ອນຮ່ວມຊາດຂອງເຮົາ ແລະໄດ້ຖືກກັກຂັງດ້ວຍກັນກັບເຂົາ ເຂົາ
ເປັນຄົນມີຊື່ສຽງດີໃນຖ້າມກາງພວກອັກຄະສາວົກ ທັງໄດ້ຢູ່ໃນ ພຣະຄຣິດ ກ່ອນເຮົາດ້ວຍ. 8ຂໍ
ຝາກຄວາມຄິດເຖິງມາຍັງທ່ານ ອຳເປຍ ເພື່ອນທີ່ຮັກຂອງເຮົາໃນອົງ ພຣະຜູ້ເປັນເຈົ້າ. 9ຂໍຝາກ
ຄວາມຄິດເຖິງມາຍັງທ່ານ ອູຣະບານ ຜູ້ຮ່ວມງານກັບພວກເຮົາໃນພຣະລາຊະກິດຂອງ ພຣະຄຣິດ
ແລະຂໍຝາກຄວາມຄິດເຖິງມາຍັງທ່ານ ຊະຕາຂີ ເພື່ອນທີ່ຮັກຂອງເຮົາ. 10ຂໍຝາກຄວາມຄິດເຖິງ
ມາຍັງທ່ານ ອະເປເລ ຜູ້ເປັນທີ່ພໍພຣະໄທຂອງ ພຣະຄຣິດ ຂໍຝາກຄວາມຄິດເຖິງມາຍັງໄທເຮືອນ
ຂອງທ່ານ ອາຣິດໂຕບູໂລ. 11ຂໍຝາກຄວາມຄິດເຖິງມາຍັງທ່ານ ເຮໂຣດີໂອນ ເພື່ອຮ່ວມຊາດກັບ
ເຮົາ ແລະຂໍຝາກຄວາມຄິດເຖິງມາຍັງໄທເຮືອນຂອງທ່ານ ນາຣະກິດ ທີ່ຢູ່ໃນອົງ ພຣະຜູ້ເປັນເຈົ້າ.
12ຂໍຝາກຄວາມຄິດເຖິງມາຍັງນາງ ຕີຟາຍນາ ແລະນາງ ທີໂຟຊາ ຜູ້ໄດ້ເຮັດການຍາກໜັກຝ່າຍ
ອົງ ພຣະຜູ້ເປັນເຈົ້າ ຂໍຝາກຄວາມຄິດເຖິງມາຍັງນາງ ເປຊີດາ ເພື່ອນທີ່ຮັກ ຜູ້ໄດ້ຮັບການຍາກ
ໜັກຫລາຍໃນຝ່າຍອົງ ພຣະຜູ້ເປັນເຈົ້າ. 13ຂໍຝາກຄວາມຄິດເຖິງມາຍັງທ່ານ ຣູໂຟ ຜູ້ດີເລີດໃນອົງ
ພຣະຜູ້ເປັນເຈົ້າ ແລະມານດາຂອງເພິ່ນຊຶ່ງເປັນເໝືອນມານດາຂອງເຮົາດ້ວຍ. 14ຂໍຝາກຄວາມ
ຄິດເຖິງມາຍັງ ອາຊິນກຣິດ, ທ່ານ ຟະເລໂກນ, ທ່ານ ເຮຣະເມ, ທ່ານ ປະໂຕບາ, ທ່ານ ເຮຣະ-
ມາ, ແລະບັນດາພີ່ນ້ອງທີ່ຢູ່ກັບເຂົາເຫລົ່ານັ້ນ. 15ຂໍຝາກຄວາມຄິດເຖິງມາຍັງທ່ານ ຟີໂລໂລກ
ແລະນາງ ຢູເລຍ, ທ່ານ ເນເຣ ກັບນ້ອງສາວຂອງທ່ານ, ແລະທ່ານ ໂອລິມປາ ກັບບັນດາໄພ່ພົນ
ຂອງພຣະອົງທີ່ຢູ່ກັບເຂົາເຫລົ່ານັ້ນ. 16ຈົ່ງຄຳນັບກັນແລະກັນດ້ວຍທຳນຽມຈູບອັນບໍລິສຸດ[ຂ] ບັນ-
ດາຄຣິສຕະຈັກຂອງ ພຣະຄຣິດ ກໍຝາກຄວາມຄິດເຖິງມາຍັງເຈົ້າທັງຫລາຍດ້ວຍ.

## ຄຳເຕືອນສະຕິສຸດທ້າຍ

17ບັດນີ້ພີ່ນ້ອງທັງຫລາຍເອີຍ, ເຮົາອ້ອນວອນຂໍໃຫ້ເຈົ້າທັງຫລາຍສັງເກດເບິ່ງຄົນເຫລົ່ານັ້ນ
ທີ່ກໍ່ເຫດວິວາດແລະເຮັດໃຫ້ຄົນອື່ນຫລົງ ຊຶ່ງເປັນການຜິດຄຳສອນທີ່ພວກເຈົ້າໄດ້ຮຽນມາແລ້ວ
ຈົ່ງປິ່ນໜ້າໜີຈາກຄົນພວກນັ້ນເສຍ. 18ດ້ວຍວ່າຄົນຢ່າງນັ້ນກໍບໍ່ໄດ້ບົວລະບັດ ພຣະຄຣິດ ເຈົ້າ
ຂອງເຮົາທັງຫລາຍ ແຕ່ໄດ້ບົວລະບັດປະໂຫຍດສ່ວນຕົວ ແລະໄດ້ຫລອກລໍ້ຄົນຊື່ໃຫ້ຫລົງດ້ວຍ
ຄຳທະເລາະອ່ອນຫວານ. 19ການທີ່ເຈົ້າທັງຫລາຍໄດ້ເຊື່ອຟັງນັ້ນກໍຊ່າລືໄປເຖິງຫູຄົນທັງປວງ
ແລ້ວ ເຮົາຈຶ່ງມີຄວາມຍິນດີເພາະເຈົ້າທັງຫລາຍ ແຕ່ຢາກໃຫ້ເຈົ້າສະຫລຽວສະຫລາດຝ່າຍການດີ
ແລະໃຫ້ເປັນຄົນຊື່ວຝ່າຍການຊົ່ວ. 20ຍັງບໍ່ຊ້າບໍ່ນານ ພຣະເຈົ້າຜູ້ຊົງ ໂຜດປະທານສັນຕິສຸກຈະຊົງ
ປາບ ຊາຕານ ໃຫ້ມຸ່ນລົງໃຕ້ພື້ນຕີນຂອງເຈົ້າທັງຫລາຍ. ຂໍໃຫ້ພຣະຄຸນຂອງ ພຣະເຢຊູເຈົ້າ ຂອງ
ເຮົາທັງຫລາຍ ຈົ່ງສະຖິດຢູ່ກັບພວກເຈົ້າເທີນ.

21ທ່ານ ຕີໂມທຽວ ເພື່ອນຮ່ວມງານກັບເຮົາ ແລະທ່ານ ລູກີໂອ, ທ່ານ ຢາໂຊນ, ແລະທ່ານ ໂຊຊິ-
ປາໂທ ເພື່ອນຮ່ວມຊາດຂອງເຮົາ ກໍຝາກຄວາມຄິດເຖິງມາຍັງເຈົ້າທັງຫລາຍດ້ວຍ. 22(ຂ້າພະ-
ເຈົ້າ ຄື ເຕຣະຕຽວ ຜູ້ຂຽນຈົດໝາຍສະບັບນີ້[ກ] ຂໍຝາກຄວາມຄິດເຖິງມາຍັງພວກທ່ານໃນອົງ

[ກ]ຄືສະໝຽນຜູ້ໜຶ່ງທີ່ໄດ້ຂຽນຈົດໝາຍຕາມຄຳບອກຂອງໂປໂລ. [ຂ]ສຳເນົາຕົ້ນສະບັບບາງສະບັບເອົາເນື້ອຄວາມ ຂໍ້ 25-27 ໄວ້ທ້າຍບົດທີ 14 ສະບັບໜຶ່ງໄວ້ທ້າຍບົດທີ 15 ສະບັບອື່ນ ໆ ບາງສະບັບຖີ້ມຂໍ້ຄວາມນີ້ທັງໝົດ.

ພຣະຜູ້ເປັນເຈົ້າ.) 23ທ່ານ ຄາໂຢ ເຈົ້າຂອງບ້ານ ຜູ້ຮັບລ້ຽງເຮົາແລະຜູ້ລຳລຸງຄຣິສຕະຈັກໜ່ວຍນີ້
ຂໍຝາກຄວາມຄິດເຖິງມາຍັງເຈົ້າທັງຫລາຍ ເອຣາຊະໂຕ ພະນັກງານຄັງຂອງເມືອງແລະ ກູອາໂຕ
ຜູ້ເປັນພີ່ນ້ອງຂອງເຮົາ ກໍຝາກຄວາມຄິດເຖິງມາຍັງເຈົ້າທັງຫລາຍດ້ວຍ. 24[ຂໍໃຫ້ພຣະຄຸນແຫ່ງ
ພຣະເຢຊູຄຣິດ ເຈົ້າຂອງພວກເຮົາ ຈົ່ງສະຖິດຢູ່ນຳເຈົ້າທັງຫລາຍທຸກຄົນເທີ້ນ ອາແມນ.]

## ຄຳຖວາຍພຣະກຽດຕອນຈົບ

25ຈົ່ງຖວາຍພຣະກຽດແກ່ພຣະຜູ້ຊົງລິດອາດໃຫ້ເຈົ້າທັງຫລາຍຕັ້ງໝັ້ນຄົງຢູ່, ຕາມຂ່າວປະເສີດ
ຊຶ່ງເຮົາປະກາດນັ້ນ, ຕາມທີ່ໄດ້ປະກາດເຖິງເລື່ອງພຣະເຢຊູຄຣິດ, ຕາມການເປີດເຜີຍຂໍ້ຄວາມ
ອັນເລິກລັບ ຊຶ່ງໄດ້ປົກບັງໄວ້ຕັ້ງແຕ່ອາດີດຕະການພຸ້ນ. 26ແຕ່ບັດນີ້ໄດ້ເປີດເຜີຍໃຫ້ປະກົດແລ້ວ
ແລະໂດຍຄຳພີຂອງພວກຜູ້ປະກາດພຣະທຳຕາມຊຶ່ງພຣະເຈົ້າຜູ້ຊົງຕັ້ງຢູ່ຖາວອນໄດ້ຊົງບັນຍັດ
ໄວ້ ກໍໄດ້ເປີດເຜີຍອອກໃຫ້ປະຊາຊາດທັງປວງເຫັນແຈ້ງເພື່ອເຂົາຈະໄດ້ເຊື່ອຟັງ. 27ໂດຍພຣະ-
ເຢຊູຄຣິດ ພຣະກຽດຕິຍົດຈົ່ງມີແກ່ພຣະເຈົ້າຜູ້ຊົງພຣະປັນຍາແຕ່ອົງດຽວສືບໆ ໄປເປັນນິດ ອາ
ແມນ.[ຂ]

* * *

# ຈົດໝາຍຂອງໂປໂລ ເຖິງຄຣິສຕະຈັກໃນເມືອງ
# ໂກຣິນໂທ ສະບັບຕົ້ນ

## ບົດທີ 1

1ໂປໂລ ຜູ້ທີ່ພຣະເຈົ້າຊົງເອີ້ນໄວ້ເປັນອັກຄະສາວົກຂອງພຣະເຢຊູຄຣິດ ຕາມນໍ້າພຣະໄທ
ຂອງພຣະອົງ ກັບໂສດສະເທນຜູ້ເປັນນ້ອງ. 2ເຖິງ ຄຣິສຕະຈັກຂອງພຣະເຈົ້າທີ່ຢູ່ເມືອງໂກ-
ຣິນໂທ ຜູ້ໄດ້ຮັບການຊົງຊໍາລະໃຫ້ບໍລິສຸດໃນພຣະເຢຊູຄຣິດ ຊຶ່ງພຣະອົງໄດ້ຊົງເອີ້ນໃຫ້ເປັນໄພ່
ພົນດ້ວຍກັນກັບຄົນທັງປວງທຸກບ່ອນ ທີ່ຮ້ອງອອກພຣະນາມຂອງພຣະເຢຊູຄຣິດເຈົ້າຂອງເຮົາ
ທັງຫລາຍຄືພຣະຜູ້ເປັນເຈົ້າຂອງເຂົາແລະຂອງພວກເຮົາດ້ວຍ. 3ຂໍພຣະຄຸນແລະສັນຕິສຸກຈາກ
ພຣະບິດາເຈົ້າຂອງເຮົາທັງຫລາຍ ແລະຈາກພຣະເຢຊູຄຣິດເຈົ້າ ຈົ່ງມີແກ່ເຈົ້າທັງຫລາຍເທີນ.

### ພຣະພອນທີ່ມາໂດຍທາງພຣະຄຣິດ

4ເຮົາໂມທະນາພຣະຄຸນພຣະເຈົ້າຂອງເຮົາໃນເລື່ອງເຈົ້າທັງຫລາຍຢູ່ສະເໝີ ເພາະພຣະຄຸນ
ຂອງພຣະເຈົ້າຊຶ່ງຊົງປະທານແກ່ພວກເຈົ້າໃນພຣະເຢຊູຄຣິດ. 5ເພາະໃນພຣະອົງນັ້ນເຈົ້າທັງ-
ຫລາຍໄດ້ຄົບເຕັມບໍລິບູນດ້ວຍທຸກສິ່ງ ທັງຝ່າຍວາຈາແລະຄວາມຮູ້ທຸກຢ່າງ. 6ດ້ວຍວ່າຄໍາພະ-
ຍານເລື່ອງພຣະຄຣິດນັ້ນເປັນທີ່ຮັບຮອງແນ່ນອນໃນຖ້າມກາງພວກເຈົ້າດ້ວຍ. 7ຈົນເຈົ້າທັງ-
ຫລາຍບໍ່ໄດ້ຂາດເຂີນຂອງພຣະລາຊະທານຈັກຢ່າງ ໃນຂະນະທີ່ເຈົ້າທັງຫລາຍຄອຍຖ້າການ
ສະເດັດມາປະກົດຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາ. 8ພຣະອົງຈະຊົງບັນດານໃຫ້ເຈົ້າທັງ-
ຫລາຍຕັ້ງໝັ້ນຄົງຢູ່ຈົນເຖິງທີ່ສຸດ ເພື່ອໃຫ້ພວກເຈົ້າພົ້ນຈາກການຖືກຕິ ໃນວັນຂອງພຣະເຢຊູ-
ຄຣິດເຈົ້າຂອງເຮົາທັງຫລາຍ. 9ພຣະເຈົ້າຜູ້ຊົງທ່ຽງທໍາ ພຣະອົງໄດ້ຊົງເອີ້ນພວກເຈົ້າໃຫ້ເຂົ້າສໍາ-
ພັນສະໜິດກັບພຣະບຸດຂອງພຣະອົງ ຄືພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ.

### ການແບ່ງແຍກໃນຄຣິສຕະຈັກ

10ພີ່ນ້ອງທັງຫລາຍເອີຍ, ເຮົາອ້ອນວອນເຈົ້າທັງຫລາຍໃນພຣະນາມຂອງພຣະເຢຊູຄຣິດເຈົ້າ
ຂອງເຮົາທັງຫລາຍ ຂໍໃຫ້ພວກເຈົ້າໃຊ້ຄວາມເວົ້າຢ່າງຖືກຕ້ອງປອງດອງກັນ ຢ່າຖືພັກຖືພວກ
ແຕ່ໃຫ້ເຈົ້າທັງຫລາຍຮ່ວມເຂົ້າສະໜິດກັນເປັນນໍ້າໜຶ່ງໃຈດຽວ ມີຈຸດປະສົງຢ່າງດຽວກັນ. 11ພີ່-
ນ້ອງທັງຫລາຍຂອງເຮົາເອີຍ, ເຫດວ່າມີບາງຄົນທີ່ມາຈາກນາງຂະໂລເອ ໄດ້ເລົ່າເລື່ອງຂອງ
ເຈົ້າທັງຫລາຍໃຫ້ເຮົາຟັງວ່າ ເກີດມີການຜິດຖຽງກັນໃນຖ້າມກາງພວກເຈົ້າ. 12ດັ່ງນີ້ເຮົາໝາຍ
ຄວາມວ່າ ຄືພວກເຈົ້າຕ່າງຄົນກໍຕ່າງກ່າວວ່າ, “ຂ້ອຍເປັນຝ່າຍໂປໂລ” ຫລື “ຂ້ອຍເປັນຝ່າຍ
ອາໂປໂລ” ຫລື “ຂ້ອຍເປັນຝ່າຍເກຟາ ຫລື “ຂ້ອຍເປັນຝ່າຍພຣະຄຣິດ”. 13ພຣະຄຣິດແບ່ງ
ອອກເປັນຫລາຍອົງແລ້ວຫລື ໂປໂລໄດ້ຖືກຄຶງໄວ້ເພື່ອພວກເຈົ້າຫລື ເຈົ້າໄດ້ຮັບບັບຕິສະມາໃນ
ນາມຂອງໂປໂລຫລື. 14ເຮົາຂອບພຣະຄຸນພຣະເຈົ້າທີ່ເຮົາບໍ່ໄດ້ທໍາພິທີບັບຕິສະມາໃຫ້ຜູ້ໃດໃນ
ພວກເຈົ້າ ເວັ້ນແຕ່ທ່ານກີສະໂປກັບທ່ານຄາໂຢ. 15ດັ່ງນັ້ນຈຶ່ງບໍ່ມີຜູ້ໃດຈະເວົ້າໄດ້ວ່າ ພວກເຈົ້າ

ໄດ້ຮັບບັບຕິສະມາໃນນາມຂອງເຮົາ. 16(ເຮົາໄດ້ໃຫ້ບັບຕິສະມາແກ່ຄອບຄົວຂອງສະເຕຟານາ
ດ້ວຍ ນອກຈາກຄົນເຫລົ່ານັ້ນແລ້ວ ເຮົາກໍບໍ່ຮູ້ວ່າ ເຮົາໄດ້ໃຫ້ບັບຕິສະມາແກ່ຜູ້ໃດອີກ.)
17ເພາະວ່າພຣະຄຣິດບໍ່ໄດ້ຊົງໃຊ້ເຮົາໄປເພື່ອທຳພິທີບັບຕິສະມາ ແຕ່ຊົງໃຊ້ໄປເພື່ອປະກາດຂ່າວ
ປະເສີດ ແຕ່ບໍ່ແມ່ນອາໄສຄວາມເວົ້າອັນສະຫລາດສະຫລຽວ ເພາະຢ້ານວ່າໄມ້ກາງແຂນຂອງ
ພຣະຄຣິດຈະເສຍປະໂຫຍດ.

## ພຣະຄຣິດຄືລິດອຳນາດແລະພຣະປັນຍາຂອງພຣະເຈົ້າ

18ຝ່າຍຄົນທັງຫລາຍທີ່ກຳລັງຈິບຫາຍນັ້ນ ເຂົາເຫັນວ່າເລື່ອງໄມ້ກາງແຂນເປັນເລື່ອງໂງ່ ແຕ່
ສຳລັບເຮົາທັງຫລາຍທີ່ກຳລັງຊົງໂຜດໃຫ້ພົ້ນນັ້ນ ກໍເຫັນວ່າເປັນລິດອຳນາດຂອງພຣະເຈົ້າ.
19ເພາະມີຄຳຂຽນໄວ້ໃນພຣະຄຳພີວ່າ, "ເຮົາຈະທຳລາຍປັນຍາຂອງຄົນມີປັນຍາ ແລະຈະໃຫ້
ຄວາມສະຫລາດຂອງຄົນສະຫລາດສູນເສຍໄປ". 20ຄົນມີປັນຍາຢູ່ໃສ ນັກທຳຢູ່ໃສ ນັກໂຕ້ຕອບ
ບັນຫາສະໄໝນີ້ຢູ່ໃສ ພຣະເຈົ້າບໍ່ໄດ້ຊົງກະທຳໃຫ້ປັນຍາຂອງໂລກກາຍເປັນຄວາມໂງ່ຫລື.
21ເພາະຕາມພຣະສະຕິປັນຍາຂອງພຣະເຈົ້າຊົງເຫັນວ່າ ມະນຸດບໍ່ສາມາດຮູ້ຈັກພຣະເຈົ້າໄດ້
ດ້ວຍປັນຍາຂອງຕົນ ພຣະເຈົ້າຈຶ່ງຊອບພຣະໄທຊົງໂຜດຄົນທັງຫລາຍທີ່ເຊື່ອນັ້ນ ໃຫ້ພົ້ນດ້ວຍ
ຄຳເທດສະໜາເລື່ອງທີ່ເຂົາຖືວ່າໂງ່. 22ຝ່າຍພວກຢິວກໍຂໍເຫັນການສຳຄັນ ແລະພວກຕ່າງຊາດ
ກໍຊອກຫາປັນຍາ. 23ແຕ່ພວກເຮົາປະກາດເລື່ອງພຣະຄຣິດຜູ້ຊົງຖືກຄຶງໄວ້ທີ່ໄມ້ກາງແຂນນັ້ນ
ອັນເປັນສິ່ງທີ່ໃຫ້ພວກຢິວຊູນສະດຸດ ແລະເປັນເລື່ອງທີ່ພວກຕ່າງຊາດຖືວ່າໂງ່. 24ແຕ່ຄົນທັງ-
ຫລາຍທີ່ພຣະເຈົ້າຊົງເອີ້ນໄວ້ແລ້ວນັ້ນ ທັງຄົນຢິວກັບຄົນຕ່າງຊາດ ກໍຖືວ່າພຣະຄຣິດເປັນລິດ
ອຳນາດແລະພຣະສະຕິປັນຍາຂອງພຣະເຈົ້າ. 25ດ້ວຍວ່າຄວາມໂງ່ຂອງພຣະເຈົ້າກໍຍັງສະ-
ຫລາດກວ່າປັນຍາຂອງມະນຸດ ແລະຄວາມອ່ອນແຮງຂອງພຣະເຈົ້າກໍເຂັ້ມແຂງກວ່າກຳລັງຂອງ
ມະນຸດ.

26ພີ່ນ້ອງທັງຫລາຍເອີຍ, ຈົ່ງພິຈາລະນາເບິ່ງວ່າ ພວກເຈົ້າທີ່ພຣະເຈົ້າໄດ້ຊົງໂຜດເອີ້ນມານັ້ນ
ເປັນຄົນຢ່າງໃດ ຄືຄົນທີ່ມະນຸດຖືວ່າສະຫລາດກໍມີໜ້ອຍຄົນ, ຄົນທີ່ມີອຳນາດກໍມີໜ້ອຍຄົນ, ຄົນ
ທີ່ມີຖານະສູງກໍມີໜ້ອຍຄົນ. 27ແຕ່ພຣະເຈົ້າໄດ້ຊົງເລືອກເອົາສິ່ງທີ່ມະນຸດຖືວ່າໂງ່ນັ້ນ ເພື່ອຈະ
ໃຫ້ຄົນສະຫລາດຖືກອັບອາຍ ແລະໄດ້ຊົງເລືອກເອົາສິ່ງທີ່ມະນຸດຖືວ່າອ່ອນກຳລັງ ເພື່ອໃຫ້ຄົນທີ່
ມີກຳລັງຖືກອັບອາຍ. 28ພຣະເຈົ້າໄດ້ຊົງເລືອກເອົາສິ່ງທີ່ມະນຸດຖືວ່າຕ່ຳຕ້ອຍແລະດູໝິ່ນ ແລະ
ເຫັນວ່າບໍ່ສຳຄັນ ເພື່ອທຳລາຍສິ່ງທີ່ມະນຸດຖືວ່າສຳຄັນ. 29ເພື່ອບໍ່ໃຫ້ມະນຸດຈັກຄົນອວດຕົວໄດ້ຕໍ່
ພຣະພັກພຣະເຈົ້າ. 30ໂດຍພຣະອົງນັ້ນເຈົ້າທັງຫລາຍຈຶ່ງຢູ່ໃນພຣະເຢຊູຄຣິດ ເພາະພຣະເຈົ້າ
ໄດ້ຊົງຕັ້ງພຣະອົງໃຫ້ເປັນສະຕິປັນຍາແລະຄວາມຊອບທຳຂອງເຮົາ, ແລະເປັນຜູ້ຊົງຕັ້ງເຮົາໄວ້
ເປັນໄພ່ພົນຂອງພຣະເຈົ້າ, ແລະຊົງໄຖ່ເຮົາໃຫ້ພົ້ນ. 31ເພື່ອໃຫ້ເປັນໄປຕາມຄຳທີ່ຂຽນໄວ້ໃນ
ພຣະຄຳພີແລ້ວວ່າ, "ຜູ້ອວດອ້າງນັ້ນຈົ່ງເອົາພຣະອົງເຈົ້າມາອວດອ້າງ".

# ບົດທີ 2

## ຄຳປະກາດເລື່ອງພຣະຄຣິດທີ່ຊົງຖືກຄຶງໄວ້

1ພີ່ນ້ອງທັງຫລາຍເອີຍ, ເມື່ອເຮົາໄດ້ມາຫາເຈົ້າທັງຫລາຍ ເຮົາບໍ່ໄດ້ມາເພື່ອປະກາດຄຳພະ-
ຍານເລື່ອງພຣະເຈົ້າ[ກ] ແກ່ພວກເຈົ້າ ດ້ວຍຖ້ອຍຄຳອັນໜ້າຟັງ ຫລືດ້ວຍສະຕິປັນຍາ. 2ເພາະ-
ວ່າເຮົາຕັ້ງໃຈວ່າຈະບໍ່ສະແດງຄວາມຮູ້ເລື່ອງໃດໆ ໃນຖ້າມກາງພວກເຈົ້າ ເວັ້ນແຕ່ເລື່ອງພຣະ-
ເຢຊູຄຣິດ ແລະການທີ່ພຣະອົງຊົງຖືກຄຶງໄວ້ທີ່ໄມ້ກາງແຂນນັ້ນ. 3ແລະເມື່ອເຮົາຢູ່ກັບພວກເຈົ້າ
ທັງຫລາຍ ເຮົາກໍອ່ອນກຳລັງແລະມີຄວາມຢ້ານຫລາຍຈົນຕົວສັ່ນ. 4ຄຳເວົ້າແລະຄຳເທດສະໜາ
ຂອງເຮົາບໍ່ແມ່ນຄຳທີ່ສະຫລາດສະຫລຽວອັນກ່ອມໃຈ ແຕ່ເປັນຄຳຊຶ່ງສະແດງພຣະວິນຍານ
ແລະລິດອຳນາດ. 5ເພື່ອຄວາມເຊື່ອຂອງເຈົ້າທັງຫລາຍຈະບໍ່ໄດ້ອາໄສສະຕິປັນຍາຂອງມະນຸດ
ແຕ່ອາໄສລິດອຳນາດຂອງພຣະເຈົ້າ.

## ການສະແດງທາງພຣະວິນຍານຂອງພຣະເຈົ້າ

6ເຖິງປານນັ້ນເຮົາກໍເຄີຍກ່າວດ້ວຍສະຕິປັນຍາໃນຖ້າມກາງຄົນທີ່ແກ່ແລ້ວ ແຕ່ບໍ່ແມ່ນດ້ວຍ
ປັນຍາຂອງຄົນສະໄໝນີ້ ຫລືດ້ວຍປັນຍາຂອງພວກຜູ້ປົກຄອງໃນສະໄໝນີ້ຊຶ່ງກຳລັງເສື່ອມສູນ
ໄປ. 7ແຕ່ເຮົາກ່າວດ້ວຍພຣະປັນຍາຂອງພຣະເຈົ້າຊຶ່ງເປັນຂໍ້ລັບເລິກ ຄືພຣະສະຕິປັນຍາທີ່ຊົງ
ເຊື່ອງໄວ້ນັ້ນ ແລະທີ່ພຣະເຈົ້າໄດ້ຊົງກຳນົດໄວ້ກ່ອນປະຖົມມະການ ເພື່ອເປັນສະຫງ່າລາສີແກ່
ພວກເຮົາ. 8ບໍ່ມີຜູ້ປົກຄອງຄົນໃດໃນສະໄໝນີ້ໄດ້ຮູ້ເຖິງພຣະປັນຍານັ້ນ ເພາະວ່າຖ້າຮູ້ແລ້ວ ເຂົາ
ຄົງຈະບໍ່ໄດ້ເອົາອົງພຣະຜູ້ເປັນເຈົ້າຜູ້ຊົງລັດສະໝີຄຶງໄວ້ທີ່ໄມ້ກາງແຂນ. 9ແຕ່ເໝືອນມີຄຳຂຽນ
ໄວ້ໃນພຣະຄຳພີແລ້ວວ່າ, “ສິ່ງທີ່ຕາບໍ່ໄດ້ເຫັນ, ຫູບໍ່ໄດ້ຍິນ, ແລະສິ່ງທີ່ມະນຸດຄຶດບໍ່ອອກ ຄືສິ່ງ
ນັ້ນທີ່ພຣະເຈົ້າໄດ້ຊົງຈັດແຈງໄວ້ສຳລັບຄົນທີ່ຮັກພຣະອົງ.” 10ແຕ່ພຣະເຈົ້າໄດ້ຊົງສະແດງສິ່ງ
ເຫລົ່ານັ້ນແກ່ເຮົາທັງຫລາຍທາງພຣະວິນຍານ ເພາະວ່າພຣະວິນຍານຊົງຢັ່ງຮູ້ທຸກສິ່ງ ແມ່ນ
ເປັນຄວາມເລິກລັບຂອງພຣະເຈົ້າ. 11ດ້ວຍວ່າໃຜໜໍ, ອາດຮູ້ຄວາມຄຶດຂອງມະນຸດໄດ້ ເວັ້ນແຕ່
ຈິດວິນຍານພາຍໃນມະນຸດຜູ້ນັ້ນເອງ ດັ່ງນັ້ນແຫລະ, ພຣະໄທຂອງພຣະເຈົ້າບໍ່ມີຜູ້ໃດຮູ້ໄດ້ ເວັ້ນ
ແຕ່ພຣະວິນຍານຂອງພຣະເຈົ້າເທົ່ານັ້ນ. 12ເຮົາທັງຫລາຍບໍ່ໄດ້ຮັບວິນຍານຂອງໂລກ ແຕ່ໄດ້
ຮັບພຣະວິນຍານຊຶ່ງມາຈາກພຣະເຈົ້າ ເພື່ອເຮົາທັງຫລາຍຈະໄດ້ຮູ້ເຖິງສິ່ງຕ່າງໆ ທີ່ພຣະເຈົ້າ
ໄດ້ຊົງໂຜດປະທານແກ່ພວກເຮົານັ້ນ. 13ເຮົາບໍ່ໄດ້ກ່າວສິ່ງເຫລົ່ານີ້ດ້ວຍຖ້ອຍຄຳຊຶ່ງປັນຍາຂອງ
ມະນຸດສອນໄວ້ ແຕ່ດ້ວຍຖ້ອຍຄຳຊຶ່ງພຣະວິນຍານໄດ້ຊົງສັ່ງສອນ ຄືເຮົາໄດ້ອະທິບາຍຄວາມ
ໝາຍຂອງເລື່ອງຝ່າຍວິນຍານໃຫ້ຄົນທີ່ມີພຣະວິນຍານຟັງ. 14ແຕ່ມະນຸດທີ່ມີຈິດໃຈທຳມະດາຈະ
ຮັບສິ່ງເຫລົ່ານັ້ນ ຊຶ່ງເປັນຂອງພຣະວິນຍານແຫ່ງພຣະເຈົ້າກໍບໍ່ໄດ້ ເພາະເຂົາເຫັນວ່າສິ່ງເຫລົ່າ-
ນັ້ນເປັນຄວາມໂງ່ ແລະເຂົາບໍ່ສາມາດເຂົ້າໃຈໄດ້ ເພາະວ່າທີ່ຈະເຂົ້າໃຈສິ່ງເຫລົ່ານັ້ນໄດ້ ກໍຕ້ອງ
ອາໄສພຣະວິນຍານ. 15ແຕ່ຜູ້ທີ່ຢູ່ຝ່າຍພຣະວິນຍານກໍສັງເກດຮູ້ສິ່ງສາລະພັດໄດ້ ແຕ່ບໍ່ມີໃຜ
ສັງເກດຮູ້ໃຈຜູ້ນັ້ນໄດ້. 16“ດ້ວຍວ່າຜູ້ໃດໜໍ ໄດ້ຮູ້ຈັກພຣະໄທຂອງອົງພຣະຜູ້ເປັນເຈົ້າ ຈິ່ງຈະ
ສັ່ງສອນພຣະອົງໄດ້” ແຕ່ຝ່າຍເຮົາທັງຫລາຍກໍມີພຣະໄທຂອງພຣະຄຣິດ.

[ກ]ສຳເນົາກົກສະບັບເກົ່າແກ່ມີຂໍ້ຄວາມດັ່ງຕໍ່ໄປນີ້ວ່າ “ປະກາດຂໍ້ເລິກລັບເລື່ອງພຣະເຈົ້າ...

# ບົດທີ 3

## ເພື່ອນຮ່ວມງານເພື່ອພຣະເຈົ້າ

1ພີ່ນ້ອງທັງຫລາຍ ເອີຍ, ຝ່າຍ ເຮົາຈະ ເວົ້າກັບ ເຈົ້າທັງຫລາຍ ເໝືອນ ເວົ້າກັບຜູ້ທີ່ຢູ່ຝ່າຍ ພຣະ-
ວິນຍານ ແລ້ວບໍ່ໄດ້ ແຕ່ຕ້ອງເວົ້າກັບເຈົ້າເໝືອນເວົ້າກັບຄົນທີ່ຢູ່ຝ່າຍມະນຸດທຳມະດາ ເໝືອນກັບ
ພວກເຈົ້າ ເປັນ ເດັກອ່ອນ ໃນ ພຣະຄຣິດ. 2ເຮົາໄດ້ລ້ຽງພວກເຈົ້າດ້ວຍນ້ຳນົມບໍ່ໃຊ່ດ້ວຍອາຫານ
ແຂງ ເຫດວ່າເມື່ອກ່ອນນັ້ນເຈົ້າຍັງບໍ່ສາມາດຮັບໄດ້ ແລະເຖິງດຽວນີ້ກໍຍັງບໍ່ສາມາດ. 3ເພາະວ່າ
ເຈົ້າທັງຫລາຍຍັງຢູ່ຝ່າຍມະນຸດທຳມະດາ ດ້ວຍວ່າເມື່ອພວກເຈົ້າຍັງອິດສາກັນແລະຜິດຖຽງກັນ
ເຈົ້າທັງຫລາຍບໍ່ໄດ້ຢູ່ຝ່າຍມະນຸດທຳມະດາ ແລະບໍ່ໄດ້ດຳເນີນຊີວິດຕາມມະນຸດທຳມະດາດອກ
ຫລື. 4ເພາະ ເມື່ອຜູ້ໜຶ່ງກ່າວວ່າ, “ຂ້ອຍເປັນຝ່າຍ ໂປໂລ” ແລະອີກຜູ້ໜຶ່ງກ່າວວ່າ, “ຂ້ອຍເປັນ
ຝ່າຍ ອາໂປໂລ” ເຈົ້າທັງຫລາຍບໍ່ໄດ້ເປັນພຽງແຕ່ມະນຸດທຳມະດາຫລື.

5ຖ້າດັ່ງນັ້ນ, ອາໂປໂລ ແມ່ນໃຜ? ໂປໂລ ແມ່ນໃຜ? ກໍແມ່ນຜູ້ຮັບໃຊ້ຊຶ່ງໄດ້ສອນພວກເຈົ້າໃຫ້
ເຊື່ອ ເຮົາແຕ່ລະຄົນໄດ້ຮັບໃຊ້ຕາມທີ່ອົງ ພຣະຜູ້ເປັນເຈົ້າ ໄດ້ຊົງກຳນົດໃຫ້. 6ເຮົາເປັນຜູ້ປູກ,
ອາໂປໂລ ເປັນຜູ້ຫົດນ້ຳ, ແຕ່ ພຣະເຈົ້າ ຊົງບັນດານໃຫ້ໃຫຍ່ຂຶ້ນ. 7ເພາະສັນນັ້ນຜູ້ປູກຫລືຜູ້ຫົດນ້ຳ
ຈຶ່ງບໍ່ສຳຄັນອັນໃດ ແຕ່ ພຣະເຈົ້າ ຜູ້ຊົງບັນດານໃຫ້ໃຫຍ່ຂຶ້ນນັ້ນກໍສຳຄັນ. 8ຜູ້ປູກກັບຜູ້ຫົດກໍສະ-
ເໝີກັນ ແຕ່ທຸກຄົນກໍຈະໄດ້ຮັບລາງວັນຕາມການຂອງຕົນ. 9ເພາະວ່າເຮົາທັງຫລາຍເປັນຜູ້ຮ່ວມ
ກັນທຳງານຂອງ ພຣະເຈົ້າ[ກ] ພວກເຈົ້າເປັນໄຮ່ນາຂອງ ພຣະເຈົ້າ. 10ເຈົ້າທັງຫລາຍເປັນຕຶກຂອງ
ພຣະອົງ ໂດຍພຣະຄຸນຂອງ ພຣະເຈົ້າ ທີ່ຊົງ ໂຜດປະທານ ແກ່ເຮົາ ແລ້ວ ເຮົາໄດ້ວາງຮາກລົງ
ເໝືອນນາຍຊ່າງຜູ້ຊຳນານ ແລະຄົນອື່ນກໍມາກໍ່ຂຶ້ນ ແຕ່ທຸກຄົນຈົ່ງລະວັງໃຫ້ດີວ່າຈະກໍ່ຂຶ້ນຢ່າງ-
ໃດ. 11ເພາະວ່າຜູ້ໃດຈະວາງຮາກອື່ນອີກບໍ່ໄດ້ ນອກຈາກຮາກທີ່ຊົງວາງໄວ້ແລ້ວນັ້ນຄື ພຣະ-
ເຢຊູຄຣິດ. 12ຖ້າຜູ້ໃດຈະເອົາຄຳ, ເອົາເງິນ, ເອົາເພັດພອຍ, ເອົາໄມ້, ເອົາຫຍ້າແຫ້ງ, ເອົາ
ເຟືອງກໍດີ, ມາກໍ່ຂຶ້ນເທິງຮາກນັ້ນ. 13ການຂອງທຸກຄົນກໍຈະໄດ້ປະກົດແຈ້ງ ດ້ວຍວ່າເວລານັ້ນ
ຈະໃຫ້ເຫັນໄດ້ແຈ່ມແຈ້ງ ເພາະຈະເຫັນແຈ່ມແຈ້ງໄດ້ດ້ວຍໄຟ ໄຟນັ້ນຈະທົດລອງເບິ່ງວ່າການ
ຂອງທຸກຄົນນັ້ນເປັນຢ່າງໃດ. 14ຖ້າການງານຂອງຜູ້ໃດທີ່ກໍ່ຂຶ້ນທົນຢູ່ໄດ້ ຜູ້ນັ້ນກໍຈະໄດ້ລາງວັນ.
15ຖ້າການງານຂອງຜູ້ໃດຖືກເຜົາໄໝ້ເສຍຜູ້ນັ້ນຈະຂາດລາງວັນ ແຕ່ຕົນເອງກໍຈະໄດ້ພົ້ນ ແຕ່
ເໝືອນຜ່ານພົ້ນໄຟ.

16ເຈົ້າທັງຫລາຍບໍ່ຮູ້ຫລືວ່າພວກເຈົ້າເປັນວິຫານຂອງ ພຣະເຈົ້າ ແລະ ພຣະວິນຍານ ຂອງ
ພຣະເຈົ້າ ຊົງສະຖິດຢູ່ໃນພວກເຈົ້າ. 17ຖ້າຜູ້ໃດທຳລາຍວິຫານຂອງ ພຣະເຈົ້າ ພຣະເຈົ້າ ຈະຊົງ
ທຳລາຍຜູ້ນັ້ນ ເພາະວິຫານຂອງ ພຣະເຈົ້າ ເປັນທີ່ສັກສິດ ເຈົ້າທັງຫລາຍແຫລະ, ເປັນວິຫານນັ້ນ.

18ຢ່າໃຫ້ຜູ້ໃດຫລອກລໍ້ຕົນເອງ ຖ້າຜູ້ໃດໃນພວກເຈົ້າຄຶດວ່າຕົນເປັນຄົນມີປັນຍາໃນສະໄໝນີ້
ຈົ່ງໃຫ້ຜູ້ນັ້ນຍອມເປັນຄົນໂງ່ ເພື່ອຈະກາຍເປັນຄົນມີປັນຍາໄດ້. 19ເພາະວ່າປັນຍາຂອງໂລກນີ້
ເປັນຄວາມໂງ່ຕໍ່ພຣະພັກ ພຣະເຈົ້າ ດ້ວຍມີຄຳຂຽນໄວ້ໃນພຣະຄຳພີວ່າ, “ພຣະອົງຊົງຈັບຄົນທີ່ມີ
ປັນຍາດ້ວຍອຸບາຍຂອງເຂົາເອງ.” 20ແລະມີຄຳຂຽນໄວ້ໃນພຣະຄຳພີອີກວ່າ, “ພຣະເຈົ້າ ຊົງຊາບ

[ກ]ຫລືວ່າ “ເຮົາທັງຫລາຍເປັນຜູ້ຮ່ວມກັນທຳງານດ້ວຍກັນກັບພຣະເຈົ້າ.”

ວ່າ ຄວາມຄຶດຂອງຄົນທີ່ມີປັນຍານັ້ນເປັນການເປົ່າໆ.” [21]ເຫດສັນນັ້ນຢ່າໃຫ້ຜູ້ໃດຍົກມະນຸດຂຶ້ນ
ອວດ ດ້ວຍວ່າສິ່ງສາລະພັດເປັນຂອງເຈົ້າທັງຫລາຍແລ້ວ. [22]ເຖິງແມ່ນວ່າໂປໂລກໍດີ, ອາໂປໂລ
ແລະ ເກຟາກໍດີ, ໂລກກັບຊີວິດແລະຄວາມຕາຍກໍດີ, ຫລືສິ່ງທີ່ມີໃນປະຈຸບັນແລະອານາຄົດກໍດີ
ສິ່ງສາລະພັດນັ້ນກໍເປັນຂອງພວກເຈົ້າ. [23]ແລະພວກເຈົ້າເປັນຂອງ ພຣະຄຣິດ ແລະ ພຣະຄຣິດ
ຊົງເປັນຂອງ ພຣະເຈົ້າ.

# ບົດທີ 4

## ອັກຄະສາວົກຂອງພຣະຄຣິດ

[1]ໃຫ້ທຸກຄົນຖືວ່າພວກເຮົາເປັນຜູ້ຮັບໃຊ້ຂອງ ພຣະຄຣິດ ທັງເປັນຜູ້ປ້ອງກັນຮັກສາຂໍ້ເລິກລັບ
ຂອງ ພຣະເຈົ້າ. [2]ປະການໜຶ່ງ, ຜູ້ປ້ອງກັນຮັກສານັ້ນຈຳເປັນຕ້ອງເປັນຄົນສັດຊື່. [3]ສຳລັບເຮົາ,
ການທີ່ເຈົ້າທັງຫລາຍຫລືມະນຸດຜູ້ໃດຈະຕັດສິນຕົວເຮົານັ້ນເຮົາເຫັນວ່າເປັນເລື່ອງເລັກນ້ອຍ ເຖິງ
ແມ່ນເຮົາເອງກໍບໍ່ໄດ້ຕັດສິນຕົວເຮົາ. [4]ເພາະເຮົາບໍ່ຮູ້ວ່າເຮົາມີຜິດສິ່ງໃດ ເຖິງປານນັ້ນເຮົາກໍບໍ່ພົ້ນ
ຈາກການພິພາກສາ ແຕ່ຜູ້ພິພາກສາຕົວເຮົານັ້ນ ແມ່ນອົງ ພຣະຜູ້ເປັນເຈົ້າ. [5]ເຫດສັນນັ້ນພວກ
ເຈົ້າຢ່າຕັດສິນສິ່ງໃດກ່ອນເວລາ ຈົນກວ່າອົງ ພຣະຜູ້ເປັນເຈົ້າ ຈະສະເດັດມາ ພຣະອົງຈະຊົງ
ເປີດເຜີຍຄວາມລັບທີ່ເຊື່ອງໄວ້ໃນຄວາມມືດໃຫ້ແຈ່ມແຈ້ງ ແລະຈະຊົງເຜີຍຄວາມຄາດໝາຍໃນ
ໃຈມະນຸດດ້ວຍ ເມື່ອນັ້ນແຫລະ, ທຸກຄົນຈະໄດ້ຮັບຄຳຊົມເຊີຍຈາກ ພຣະເຈົ້າ ຕາມສົມຄວນ.

[6]ພີ່ນ້ອງທັງຫລາຍເອີຍ, ທີ່ເຮົາໄດ້ນຳເອົາເລື່ອງຕົວເຮົາກັບເລື່ອງ ອາໂປໂລ ມາກ່າວໄວ້ກໍເພື່ອ
ປະໂຫຍດຂອງເຈົ້າທັງຫລາຍ ເພື່ອໃຫ້ພວກເຈົ້າຮຽນເອົາຕາມແບບຢ່າງຂອງເຮົາຄື “ຢ່າອອກ
ນອກຂອບເຂດຂອງພຣະຄຳພີ” ບໍ່ໃຫ້ຜູ້ໃດໃນພວກເຈົ້າມີໃຈຈອງຫອງຍົກຜູ້ໜຶ່ງແລະຂົ່ມຜູ້ໜຶ່ງ.
[7]ຜູ້ໃດໄດ້ເຮັດໃຫ້ເຈົ້າຕ່າງກັນກັບຄົນອື່ນ ຫລືມີອັນໃດທີ່ເຈົ້າບໍ່ໄດ້ຮັບມາ ຖ້າເຈົ້າໄດ້ຮັບແລ້ວ
ເປັນຫຍັງເຈົ້າຈຶ່ງໂອ້ອວດເໝືອນກັບເຈົ້າບໍ່ໄດ້ຮັບເລີຍ. [8]ດຽວນີ້ເຈົ້າທັງຫລາຍກໍອີ່ມແລ້ວໜໍ, ຮັ່ງ-
ມີບໍລິບູນແລ້ວໜໍ, ໄດ້ຂຶ້ນສະເຫວີຍລາດໂດຍຮ່ວມກັບພວກເຮົາໜໍ ແມ່ນຢູ່, ເຮົາກໍປາດຖະໜາ
ຢາກໃຫ້ເຈົ້າທັງຫລາຍໄດ້ຂຶ້ນສະເຫວີຍລາດ ເພື່ອພວກເຮົາຈະໄດ້ຂຶ້ນສະເຫວີຍລາດດ້ວຍກັນກັບ
ພວກເຈົ້າ. [9]ເພາະເຮົາຄຶດເຫັນວ່າ ພຣະເຈົ້າ ໄດ້ຊົງສະແດງພວກເຮົາ ຜູ້ເປັນອັກຄະສາວົກໄວ້ໃນ
ທີ່ສຸດປາຍ[ກ] ເໝືອນຄົນທີ່ຖືກໂທດເຖິງຕາຍ ເພາະເຮົາກາຍເປັນເໝືອນໂຕລະຄອນໃຫ້ຈັກກະ-
ວານຄືເທວະດາແລະມະນຸດຊົມ. [10]ພວກເຮົາເປັນຄົນໂງ່ເພາະເຫັນແກ່ ພຣະຄຣິດ ແຕ່ພວກເຈົ້າ
ເປັນຄົນມີປັນຍາໃນ ພຣະຄຣິດ ພວກເຮົາອ່ອນກຳລັງ ແຕ່ພວກເຈົ້າມີກຳລັງ ພວກເຈົ້າມີຍົດສັກ
ແຕ່ພວກເຮົາເປັນຄົນອັບປະຍົດ. [11]ຈົນເຖິງປັດຈຸບັນນີ້ພວກເຮົາກໍຍັງອຶດເຂົ້າຢາກນ້ຳ, ຂາດ
ເຄື່ອງນຸ່ງຫົ່ມ, ຖືກທຸບຕີແລະບໍ່ມີບ່ອນພັກພາອາໄສເປັນຫລັກແຫລ່ງ. [12]ພວກເຮົາຍັງອົດສາເຮັດ
ການໜັກໜ່ວງລ້ຽງຊີບດ້ວຍມືຂອງເຮົາເອງ ເມື່ອຖືກປ້ອຍດ່າເຮົາກໍອວຍພອນ ເມື່ອຖືກຂົ່ມເຫງ
ເຮົາກໍອົດທົນເອົາ. [13]ເມື່ອຖືກນິນທາປະໝາດເຮົາກໍຊອກຫາທາງປອງດອງ ເຮົາກາຍເປັນ
ເໝືອນຂີ້ເຫຍື້ອຂອງໂລກ, ເປັນເໝືອນຂອງເສດຈາກສິ່ງສາລະພັດທີ່ໂລກເລືອກຖິ້ມຈົນເຖິງບັດ

---

[ກ]ຂໍ້ຄວາມນີ້ໝາຍເຖິງທຳນຽມທີ່ຜູ້ມີໄຊຊະນະເຄີຍນຳພາພວກຊະເລີຍເສິກເປັນກະບວນສະແດງໃຫ້ປວງ
ຊົນຊົມກ່ອນຈະອອກໄປຂ້າໃຫ້ຕາຍ.

ນີ້.

[14]ເຮົາບໍ່ໃຊ່ໄດ້ຂຽນຂໍ້ຄວາມເຫລົ່ານີ້ເພື່ອໃຫ້ເຈົ້າທັງຫລາຍລະອາຍ ແຕ່ຂຽນເພື່ອເຕືອນສະຕິ
ພວກເຈົ້າໃນຖານະເປັນລູກທີ່ຮັກຂອງເຮົາ. [15]ເພາະເຖິງແມ່ນວ່າໃນ ພຣະຄຣິດ ພວກເຈົ້າມີຜູ້ຄວບ
ຄຸມຈັກໝື່ນຄົນກໍຕາມ ແຕ່ພວກເຈົ້າກໍບໍ່ມີພໍ່ຫລາຍຄົນ ເພາະວ່າໃນ ພຣະເຢຊູຄຣິດ ແມ່ນເຮົານີ້
ແຫລະ, ໄດ້ໃຫ້ກຳເນີດແກ່ພວກເຈົ້າໂດຍຂ່າວປະເສີດ. [16]ເຫດສັນນັ້ນເຮົາຈິ່ງຂໍໃຫ້ເຈົ້າທັງຫລາຍ
ເຮັດຕາມແບບຢ່າງຂອງເຮົາໄປ. [17]ເພາະເຫດນີ້ເຮົາຈິ່ງໄດ້ໃຊ້ ຕີໂມທຽວ ລູກທີ່ຮັກຂອງເຮົາ ຜູ້
ສັດຊື່ໃນອົງ ພຣະຜູ້ເປັນເຈົ້າ ໃຫ້ມາຫາພວກເຈົ້າ ເພື່ອນຳພວກເຈົ້າໃຫ້ລະນຶກເຖິງຫລັກການປະ-
ຕິບັດຂອງເຮົາໃນ ພຣະຄຣິດ ເໝືອນທີ່ເຮົາເຄີຍສອນໃນຄຣິສຕະຈັກທົ່ວໆ ໄປ. [18]ແຕ່ມີບາງຄົນ
ໄດ້ອວດຕົວຂຶ້ນ ເໝືອນກັບວ່າເຮົາຈະບໍ່ມາຫາພວກເຈົ້າ. [19]ແຕ່ຖ້າອົງ ພຣະຜູ້ເປັນເຈົ້າ ຊົງພໍ-
ພຣະໄທ ເຮົາຈະມາຫາເຈົ້າທັງຫລາຍໃນບໍ່ຊ້ານີ້ ແລະເຮົາຈະໄດ້ຢັ່ງຮູ້ບໍ່ໃຊ່ແຕ່ຖ້ອຍຄຳຂອງຄົນ
ທີ່ອວດຕົວຂຶ້ນ ແຕ່ຈະຢັ່ງຮູ້ລິດອຳນາດຂອງເຂົານັ້ນ. [20]ເພາະວ່າລາຊະອານາຈັກຂອງ ພຣະເຈົ້າ
ບໍ່ໃຊ່ເລື່ອງຄຳເວົ້າ ແຕ່ເປັນເລື່ອງລິດອຳນາດ. [21]ເຈົ້າທັງຫລາຍຈະເອົາຢ່າງໃດ ຈະໃຫ້ເຮົາຖື
ໄມ້ແສ້ມາຫາພວກເຈົ້າ ຫລືຈະໃຫ້ເຮົາມາດ້ວຍຄວາມຮັກແລະດ້ວຍໃຈອ່ອນສຸພາບ.

# ບົດທີ 5

## ຕັດສິນລົງໂທດການຫລິ້ນຊູ້

[1]ມີຂ່າວເລົ່າລືກັນວ່າໃນພວກເຈົ້າມີການຜິດຊາຍຍິງ ແລະການຜິດຢ່າງນັ້ນ ເຖິງແມ່ນວ່າໃນ
ພວກຕ່າງຊາດກໍບໍ່ເຄີຍມີ ຄືວ່າມີຊາຍຜູ້ໜຶ່ງໄດ້ເອົາແມ່ນ້າຂອງຕົນມາເປັນເມຍ. [2]ແລະເຈົ້າທັງ-
ຫລາຍຍັງອວດຕົວຂຶ້ນ ແທນທີ່ຈະເປັນທຸກຮ້ອນໃຈ ພວກເຈົ້າຄວນຈະຕັດຜູ້ທີ່ເຮັດການຜິດຢ່າງ
ນັ້ນອອກເສຍຈາກພວກເຈົ້າ. [3]ເຖິງແມ່ນວ່າຕົວເຮົາບໍ່ໄດ້ຢູ່ນຳພວກເຈົ້າ ແຕ່ໃຈຂອງເຮົາກໍຢູ່ກັບ
ພວກເຈົ້າເຮົາໄດ້ຕັດສິນລົງໂທດຜູ້ທີ່ໄດ້ເຮັດການຜິດຢ່າງນັ້ນ ເໝືອນກັບເຮົາໄດ້ຢູ່ນຳພວກເຈົ້າ.
[4]ໃນພຣະນາມຂອງ ພຣະເຢຊູ ອົງ ພຣະຜູ້ເປັນເຈົ້າ, ເມື່ອເຈົ້າທັງຫລາຍປະຊຸມກັນ ແລະໃຈຂອງ
ເຮົາຮ່ວມຢູ່ດ້ວຍ ພ້ອມທັງລິດເດດຂອງ ພຣະເຢຊູ ອົງ ພຣະຜູ້ເປັນເຈົ້າ ຂອງພວກເຮົາ. [5]ຈົ່ງມອບ
ຜູ້ນັ້ນໄວ້ໃຫ້ ຊາຕານ ທຳລາຍ ເນື້ອກາຍ ເພື່ອໃຫ້ຈິດວິນຍານຂອງລາວໄດ້ພົ້ນໃນວັນຂອງອົງ
ພຣະຜູ້ເປັນເຈົ້າ.

[6]ການທີ່ເຈົ້າທັງຫລາຍອວດອ້າງນັ້ນບໍ່ດີດອກ ພວກເຈົ້າບໍ່ຮູ້ຫລືວ່າເຊື້ອແປ້ງແຕ່ໜ້ອຍດຽວກໍ
ແຜ່ໄປທົ່ວທັງກ້ອນ. [7]ເຫດສັນນັ້ນຈົ່ງຊຳລະເຊື້ອແປ້ງເກົ່າອອກເສຍເພື່ອເຈົ້າທັງຫລາຍຈະໄດ້
ເປັນກ້ອນໃໝ່ ເໝືອນບໍ່ມີເຊື້ອແປ້ງແລ້ວ ດ້ວຍວ່າ ພຣະຄຣິດ ຜູ້ຊົງເປັນປັດສະຄາຂອງເຮົາທັງ-
ຫລາຍ ໄດ້ຊົງຖືກຂ້າບູຊາແລ້ວ. [8]ດ້ວຍເຫດນັ້ນເຮົາທັງຫລາຍຈິ່ງຖືປັດສະຄານັ້ນ ບໍ່ໃຊ່ດ້ວຍ
ເຊື້ອເກົ່າຫລືເຊື້ອຂອງຄວາມຊົ່ວຮ້າຍແຕ່ດ້ວຍເຂົ້າຈີ່ບໍ່ມີເຊື້ອແປ້ງຄືຄວາມສັດຊື່ແລະຄວາມຈິງ.

[9]ເຮົາໄດ້ຂຽນຈົດໝາຍບອກເຈົ້າທັງຫລາຍແລ້ວວ່າ, ຢ່າຄົບຫາກັບຄົນຫລິ້ນຊູ້. [10]ແຕ່ບໍ່ໃຊ່
ໝາຍເຖິງຊາວໂລກທີ່ຫລິ້ນຊູ້, ຫລືຄົນໂລບ, ຄົນຂົ່ມຂູ່, ຄົນຂາບໄຫວ້ພຣະທຽມກໍດີ ເພາະວ່າ
ຖ້າຫ້າມຢ່າງນັ້ນແລ້ວ ເຈົ້າທັງຫລາຍກໍຈະຕ້ອງອອກໄປເສຍຈາກໂລກນີ້. [11]ແຕ່ເຮົາໄດ້ຂຽນມາ

ບອກພວກເຈົ້າວ່າ ຖ້າຜູ້ໃດໄດ້ຊື່ວ່າເປັນພີ່ນ້ອງແລ້ວ ແຕ່ຍັງເປັນຄົນຫລິ້ນຊູ້, ຫລືຄົນໂລບ, ຄົນ
ຂາບໄຫວ້ພຣະທຽມ, ຄົນເວົ້າຫຍາບຊ້າ, ຄົນຂີ້ເຫລົ້າ, ຄົນຂົ່ມຂູ່ກໍດີ ຢ່າຄົບຫາກັບຄົນຢ່າງນັ້ນ
ແມ່ນແຕ່ກິນເຂົ້າຮ່ວມກໍຢ່າຊູ່ກິນ. [12]ບໍ່ແມ່ນທຸລະຂອງເຮົາທີ່ຈະໄປຕັດສິນລົງໂທດຄົນພາຍນອກ
ແມ່ນທຸລະຂອງພວກເຈົ້າທີ່ຈະຕັດສິນລົງໂທດຄົນພາຍໃນ ບໍ່ແມ່ນຫລື? [13]ສ່ວນຄົນພາຍນອກ
ນັ້ນແມ່ນພຣະເຈົ້າຊົງຕັດສິນລົງໂທດ “ຈົ່ງຂັບໄລ່ຄົນຊົ່ວນັ້ນອອກຈາກພວກເຈົ້າໄປເສຍ”.

# ບົດທີ 6

## ສູ້ຄວາມກັນຕໍ່ໜ້າຄົນນອກສາດສະໜາ

[1]ເມື່ອຜູ້ໃດໃນພວກເຈົ້າເປັນຄວາມກັນ ຈະກ້າໄປສູ້ຄວາມກັນຕໍ່ໜ້າຄົນນອກສາດສະໜາແລະ
ບໍ່ໃຊ່ຕໍ່ໜ້າໄພ່ພົນຂອງພຣະເຈົ້າຫລື. [2]ເຈົ້າທັງຫລາຍບໍ່ຮູ້ຫລືວ່າໄພ່ພົນຂອງພຣະເຈົ້າຈະພິພາກ-
ສາໂລກ ຖ້າພວກເຈົ້າຈະພິພາກສາໂລກ ເຈົ້າຈະບໍ່ສາມາດຕັດສິນເລື່ອງເລັກນ້ອຍທີ່ສຸດຫລື.
[3]ເຈົ້າທັງຫລາຍບໍ່ຮູ້ຫລືວ່າພວກເຮົາຈະພິພາກສາພວກເທວະດາ ຫລາຍກວ່ານັ້ນອີກເທົ່າໃດ ເຮົາ
ສົມຄວນຈະຕັດສິນຄວາມເລື່ອງຂອງຊີວິດນີ້. [4]ເມື່ອພວກເຈົ້າເປັນຄວາມກັນໃນເລື່ອງຊີວິດນີ້
ເປັນຫຍັງເຈົ້າຈິ່ງເອົາຄົນທີ່ຄຣິສຕະຈັກບໍ່ນັບຖືມາຕັ້ງໄວ້ໃຫ້ເປັນຜູ້ຕັດສິນ. [5]ເຮົາກ່າວດັ່ງນີ້ກໍເພື່ອ
ໃຫ້ພວກເຈົ້າເກີດລະອາຍໃຈ ໃນພວກເຈົ້າບໍ່ມີຈັກຄົນຫລືທີ່ມີປັນຍາພໍສາມາດຈະຕັດສິນຄວາມ
ລະຫວ່າງພວກພີ່ນ້ອງ. [6]ແຕ່ພີ່ນ້ອງກັບພີ່ນ້ອງຕ້ອງໄປສູ້ຄວາມກັນຕໍ່ໜ້າຄົນນອກສາດສະໜາ
ຢ່າງນັ້ນຫລື. [7]ທີ່ເຈົ້າທັງຫລາຍມີຄະດີກ່ຽວຂ້ອງກັນແລະກັນນັ້ນ ກໍເປັນການຂາດສິນທຳແທ້
ເປັນຫຍັງເຈົ້າຈິ່ງບໍ່ທົນເອົາເມື່ອເຂົາເຮັດຮ້າຍແກ່ຕົນ ເປັນຫຍັງຈິ່ງບໍ່ຍອມໃຫ້ເຂົາໂກງຕົນກໍດີກ
ວ່າ. [8]ແຕ່ເຈົ້າທັງຫລາຍຍັງເຮັດຮ້າຍແລະສໍ້ໂກງກັນໃນລະຫວ່າງພວກພີ່ນ້ອງຂອງຕົນ.

[9]ເຈົ້າທັງຫລາຍບໍ່ຮູ້ຫລືວ່າຄົນອະທຳຈະບໍ່ມີສ່ວນໃນລາຊະອານາຈັກຂອງພຣະເຈົ້າ ຢ່າເຂົ້າ-
ໃຈຜິດວ່າຄົນຫລິ້ນຊູ້ກໍດີ, ຫລືຄົນຂາບໄຫວ້ພຣະທຽມ, ຄົນຜິດຈາກຜົວເມຍກັນ, ຊາຍຫລິ້ນຄື
ຍິງ, ຊາຍຫລິ້ນກັບຊາຍ. [10]ຄົນຂະໂມຍ, ຄົນໂລບ, ຄົນຂີ້ເຫລົ້າ, ຄົນເວົ້າຫຍາບຊ້າ, ຄົນຂົ່ມຂູ່
ກໍດີ ຈະບໍ່ໄດ້ຮັບສ່ວນໃນລາຊະອານາຈັກຂອງພຣະເຈົ້າ. [11]ເມື່ອກ່ອນມີບາງຄົນໃນພວກເຈົ້າ
ເປັນຄົນຢ່າງນັ້ນ ແຕ່ເຈົ້າທັງຫລາຍໄດ້ຮັບການຊົງຊຳລະແລ້ວ, ໄດ້ຖືກຊົງຕັ້ງໄວ້ສຳລັບພຣະ-
ເຈົ້າແລ້ວ, ໄດ້ຖືກຊົງນັບເປັນຄົນຊອບທຳໃນພຣະນາມຂອງພຣະເຢຊູຄຣິດເຈົ້າ ແລະໂດຍ
ພຣະວິນຍານແຫ່ງພຣະເຈົ້າຂອງພວກເຮົາ.

## ຖວາຍກຽດແດ່ພຣະເຈົ້າດ້ວຍຮ່າງກາຍຂອງຕົນ

[12]“ເຮົາເຮັດສິ່ງສາລະພັດໄດ້ ບໍ່ມີໃຜຫ້າມ” ແຕ່ບໍ່ແມ່ນທຸກສິ່ງທີ່ໄດ້ເຮັດນັ້ນມີປະໂຫຍດ “ເຮົາ
ເຮັດສິ່ງສາລະພັດໄດ້ ບໍ່ມີໃຜຫ້າມ” ແຕ່ວ່າຝ່າຍເຮົາຈະບໍ່ຍອມຢູ່ໃຕ້ອຳນາດຂອງສິ່ງໃດ. [13]ອາ-
ຫານມີໄວ້ສຳລັບທ້ອງແລະທ້ອງກໍສຳລັບອາຫານ ແຕ່ພຣະເຈົ້າຈະຊົງໃຫ້ທັງທ້ອງແລະອາຫານ
ສູນຫາຍໄປ ສ່ວນຮ່າງກາຍນັ້ນບໍ່ໄດ້ມີໄວ້ສຳລັບການຫລິ້ນຊູ້ ແຕ່ມີໄວ້ສຳລັບອົງພຣະຜູ້ເປັນເຈົ້າ
ແລະອົງພຣະຜູ້ເປັນເຈົ້າກໍມີໄວ້ສຳລັບຮ່າງກາຍ. [14]ພຣະເຈົ້າໄດ້ຊົງບັນດານໃຫ້ອົງພຣະຜູ້ເປັນ-
ເຈົ້າຄືນຂຶ້ນມາ ແລະພຣະອົງຈະຊົງບັນດານໃຫ້ເຮົາທັງຫລາຍຄືນມາໃໝ່ ດ້ວຍລິດອຳນາດຂອງ

ພຣະອົງ. 15ເຈົ້າທັງຫລາຍບໍ່ຮູ້ຫລືວ່າຮ່າງກາຍຂອງພວກເຈົ້າເປັນອະໄວຍະວະຂອງ ພຣະຄຣິດ
ຖ້າເປັນຢ່າງນັ້ນເຮົາຈະເອົາອະໄວຍະວະຂອງ ພຣະຄຣິດ ໄປເປັນອະໄວຍະວະຂອງຍິງແມ່ຈ້າງ
ຫລື ຢ່າໃຫ້ເປັນຢ່າງນັ້ນເລີຍ. 16ເຈົ້າທັງຫລາຍບໍ່ຮູ້ຫລືວ່າຜູ້ທີ່ຕິດພັນກັບຍິງແມ່ຈ້າງກໍເປັນກາຍ
ອັນດຽວກັບຍິງນັ້ນ ເພາະພຣະເຈົ້າໄດ້ຊົງກ່າວໄວ້ວ່າ, “ເຂົາທັງສອງຈະເປັນກາຍອັນດຽວ.”
17ແຕ່ຜູ້ທີ່ຕິດພັນກັບອົງພຣະຜູ້ເປັນເຈົ້າ ກໍເປັນຈິດໃຈອັນດຽວກັບພຣະອົງ. 18ຈົ່ງຫລີກໜີເສຍ
ຈາກການຫລິ້ນຊູ້ ຜິດບາບທຸກຢ່າງທີ່ມະນຸດເຮັດນັ້ນເປັນບາບນອກກາຍ ແຕ່ຜູ້ທີ່ຫລິ້ນຊູ້ນັ້ນກໍຜິດ
ບາບຕໍ່ຮ່າງກາຍຂອງຕົນເອງ. 19ເຈົ້າທັງຫລາຍບໍ່ຮູ້ຫລືວ່າຮ່າງກາຍຂອງເຈົ້າເປັນວິຫານຂອງ
ພຣະວິນຍານບໍລິສຸດ ຜູ້ຊຶ່ງຊົງສະຖິດຢູ່ໃນພວກເຈົ້າຊຶ່ງພວກເຈົ້າໄດ້ຮັບຈາກພຣະເຈົ້າ ເຈົ້າບໍ່
ແມ່ນເຈົ້າຂອງຕົວເຈົ້າເອງ. 20ພຣະເຈົ້າໄດ້ຊົງຊື້ເຈົ້າທັງຫລາຍໄວ້ດ້ວຍລາຄາສູງ ເຫດສັນນັ້ນຈົ່ງ
ຖວາຍພຣະກຽດຕໍ່ພຣະເຈົ້າດ້ວຍຮ່າງກາຍຂອງຕົນ.

# ບົດທີ 7

## ບັນຫາກ່ຽວກັບການສົມລົດ

1ເລື່ອງທີ່ພວກເຈົ້າໄດ້ຂຽນມານັ້ນ ຂໍຕອບວ່າ ການທີ່ຜູ້ຊາຍບໍ່ຖືກຕ້ອງກ່ຽວຂ້ອງກັບແມ່ຍິງກໍດີ
ຢູ່. 2ແຕ່ເພື່ອປ້ອງກັນການຫລິ້ນຊູ້ ຜູ້ຊາຍທຸກຄົນຄວນມີເມຍຂອງຕົນແລະແມ່ຍິງທຸກຄົນຄວນມີ
ຜົວຂອງຕົນ. 3ຜົວຕ້ອງຍອມຮ່ວມຢູ່ກັບເມຍຕາມສົມຄວນ ແລະເມຍກໍຍອມຮ່ວມຢູ່ກັບຜົວເໝືອນ
ກັນ. 4ເມຍບໍ່ມີອຳນາດເໜືອຮ່າງກາຍຂອງຕົນ ແຕ່ອຳນາດນັ້ນຢູ່ນຳຜົວ ຢ່າງດຽວກັນ, ຜົວບໍ່ມີ
ອຳນາດເໜືອຮ່າງກາຍຂອງຕົນເອງ ແຕ່ອຳນາດນັ້ນຢູ່ນຳເມຍ. 5ຢ່າປະຕິເສດການຢູ່ຮ່ວມກັນ
ເວັ້ນແຕ່ໄດ້ຕົກລົງກັນເປັນການຊົ່ວຄາວ ເພື່ອອຸທິດຕົນໃນການໄຫວ້ວອນ ແລ້ວຈຶ່ງຄ່ອຍມາຢູ່
ຮ່ວມກັນອີກ ເພື່ອບໍ່ໃຫ້ຊາຕານຊັກຈູງໃຫ້ເຮັດຜິດເພາະຕົນອົດບໍ່ໄດ້. 6ເຮົາກ່າວດັ່ງນີ້ເປັນການ
ອະນຸຍາດ ບໍ່ໃຊ່ເປັນການສັ່ງ. 7ເຮົາປາດຖະໜາໃຫ້ທຸກຄົນເປັນເໝືອນຕົວເຮົາ ແຕ່ທຸກຄົນກໍໄດ້
ຮັບຂອງປະທານຈາກພຣະເຈົ້າອັນເໝາະສົມກັບຕົວຜູ້ໜຶ່ງໄດ້ຮັບຢ່າງນັ້ນ ແລະອີກຜູ້ໜຶ່ງໄດ້ຮັບ
ຢ່າງນີ້.

8ເຮົາຂໍກ່າວແກ່ຄົນທີ່ຍັງເປັນໂສດແລະພວກແມ່ໝ້າຍວ່າ ຖ້າເຂົາຈະຢູ່ເໝືອນຢ່າງເຮົາກໍດີ
ແລ້ວ. 9ແຕ່ຖ້າເຂົາອົດໃຈບໍ່ໄດ້ກໍໃຫ້ເຂົາແຕ່ງງານເສຍ ເພາະການແຕ່ງງານນັ້ນດີກວ່າມີໃຈ
ຮ້ອນຮົນດ້ວຍການລາຄະ.

10ສ່ວນຄົນທີ່ແຕ່ງງານແລ້ວ ເຮົາຂໍສັ່ງ ບໍ່ໃຊ່ເຮົາສັ່ງເອງ ແຕ່ອົງພຣະຜູ້ເປັນເຈົ້າຊົງບັນຊາ
ວ່າ ຢ່າໃຫ້ເມຍປະຜົວ. 11ແຕ່ຖ້ານາງຫາກປະຜົວໄປ ຢ່າໃຫ້ນາງເອົາຜົວໃໝ່ ຫລືບໍ່ດັ່ງນັ້ນກໍໃຫ້
ນາງກັບມາຄືນດີກັບຜົວອີກ ແລະຂໍຢ່າໃຫ້ຜົວປະຮ້າງເມຍ.

12ເຮົາຂໍກ່າວແກ່ຄົນອື່ນໆ ນອກຈາກພວກນີ້ (ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງກ່າວ) ວ່າຖ້າພີ່-
ນ້ອງຄົນໃດມີເມຍທີ່ບໍ່ເຊື່ອໃນອົງພຣະຄຣິດ ແຕ່ນາງກໍພໍໃຈຈະຢູ່ກັບຜົວນັ້ນ ຜົວບໍ່ຄວນຢ່າຮ້າງ
ນາງ. 13ຖ້າຍິງຄົນໃດທີ່ມີຜົວທີ່ບໍ່ເຊື່ອໃນອົງພຣະຄຣິດ ແຕ່ຜົວກໍພໍໃຈຈະຢູ່ກັບເມຍນັ້ນ ເມຍບໍ່
ຄວນຢ່າຮ້າງຜົວນັ້ນ. 14ເພາະວ່າຜົວທີ່ບໍ່ມີຄວາມເຊື່ອກໍໄດ້ຮັບການຊົງຊຳລະຍ້ອນເມຍ ແລະ

ເມຍທີ່ບໍ່ມີຄວາມເຊື່ອກໍໄດ້ຮັບການຊົງຊຳລະຍ້ອນຜົວນັ້ນ[ກ] ຖ້າດັ່ງນັ້ນລູກຂອງເຈົ້າທັງຫລາຍກໍບໍ່
ບໍລິສຸດ ແຕ່ບັດນີ້ລູກເຫລົ່ານັ້ນກໍບໍລິສຸດແລ້ວ. 15ແຕ່ຖ້າຜູ້ທີ່ບໍ່ມີຄວາມເຊື່ອຈະແຍກຕົວອອກໄປກໍ
ຈົ່ງໃຫ້ເພິ່ນໄປ ເລື່ອງຢ່າງນີ້ບໍ່ຈຳເປັນທີ່ພີ່ນ້ອງຊາຍຍິງຈະຜູກມັດຈຳໃຈໃຫ້ຢູ່ດ້ວຍກັນ ເພາະວ່າ
ພຣະເຈົ້າໄດ້ຊົງເອີ້ນເຈົ້າທັງຫລາຍໃຫ້ຢູ່ຢ່າງສະຫງົບ. 16ຝ່າຍເຈົ້າຜູ້ເປັນເມຍ ເຈົ້າຮູ້ໄດ້ວ່າເຈົ້າ
ຈະຊ່ອຍຜົວໃຫ້ພົ້ນໄດ້ຫລືບໍ່ ຫລືເຈົ້າຜູ້ເປັນຜົວ ເຈົ້າຮູ້ໄດ້ວ່າເຈົ້າຈະຊ່ອຍເມຍໃຫ້ພົ້ນໄດ້ຫລືບໍ່.

## ຈົ່ງດຳເນີນຊີວິດຢູ່ຕາມຖານະທີ່ພຣະເຈົ້າຊົງປະທານ

17ແຕ່ຂໍໃຫ້ທຸກຄົນດຳເນີນຊີວິດຢູ່ຕາມຖານະທີ່ອົງພຣະຜູ້ເປັນເຈົ້າຊົງປະທານແກ່ຕົນແລະ
ຕາມທີ່ພຣະເຈົ້າໄດ້ຊົງເອີ້ນເອົານັ້ນ ເຮົາຈຶ່ງວາງລະບຽບດັ່ງນັ້ນໄວ້ໃຫ້ຄຣິສຕະຈັກທົ່ວໄປ. 18ຖ້າ
ມີຜູ້ໃດທີ່ຖືກຊົງເອີ້ນເອົາເມື່ອພາຍຫລັງການຮັບພິທີຕັດ ຢ່າໃຫ້ຜູ້ນັ້ນເລີກຈາກຖານະນັ້ນເສຍ
ຫລືຖ້າວ່າມີຜູ້ທີ່ຖືກຊົງເອີ້ນເອົາໂດຍຍັງບໍ່ໄດ້ຮັບພິທີຕັດກໍຢ່າໃຫ້ຜູ້ນັ້ນຮັບ. 19ການທີ່ຮັບຫລືບໍ່ຮັບ
ພິທີຕັດກໍບໍ່ສຳຄັນ ແຕ່ການຖືຮັກສາຂໍ້ບັນຍັດຂອງພຣະເຈົ້ານັ້ນສຳຄັນ. 20ໃຫ້ທຸກຄົນຢູ່ໃນຖານະ
ທີ່ເຂົາຢູ່ເມື່ອພຣະເຈົ້າຊົງເອີ້ນເອົານັ້ນ. 21ເຈົ້າຖືກພຣະເຈົ້າຊົງເອີ້ນເອົາເມື່ອຍັງເປັນຂ້ອຍຂ້າຢູ່
ຫລືຢ່າຮ້ອນໃຈ ຖ້າເຈົ້າຈະສາມາດໄຖ່ຕົວອອກໄດ້ ກໍຄວນໄຖ່ດີກວ່າ.[ຂ] 22ເຫດວ່າຖ້າອົງ
ພຣະຜູ້ເປັນເຈົ້າຊົງເອີ້ນຜູ້ໃດເມື່ອຍັງເປັນຂ້ອຍຂ້າຢູ່ ຜູ້ນັ້ນກໍເປັນເສລີຊົນຂອງອົງພຣະຜູ້ເປັນ-
ເຈົ້າ ຢ່າງນັ້ນແຫລະ, ຄົນໃດທີ່ໄດ້ຮັບການຊົງເອີ້ນເມື່ອເປັນເສລີຊົນ ຄົນນັ້ນກໍເປັນຂ້ອຍຂ້າ
ຂອງພຣະຄຣິດ. 23ພຣະເຈົ້າໄດ້ຊົງຊື້ເຈົ້າທັງຫລາຍດ້ວຍລາຄາສູງ ຢ່າກັບໄປເປັນຂ້ອຍຂ້າຂອງ
ມະນຸດ. 24ພີ່ນ້ອງທັງຫລາຍເອີຍ, ເຈົ້າທຸກຄົນຢູ່ໃນຖານະໃດເມື່ອພຣະເຈົ້າຊົງເອີ້ນ ກໍໃຫ້ຕັ້ງຢູ່
ກັບພຣະເຈົ້າໃນຖານະນັ້ນ.

## ເລື່ອງຄົນໂສດແລະພວກແມ່ໝ້າຍ

25ເລື່ອງຄົນໂສດນັ້ນເຮົາບໍ່ໄດ້ຮັບພຣະບັນຊາຈາກອົງພຣະຜູ້ເປັນເຈົ້າ ແຕ່ເຮົາຂໍອອກຄວາມ
ເຫັນໃນຖານະທີ່ເປັນຜູ້ໄດ້ຮັບພຣະຄຸນຈາກອົງພຣະຜູ້ເປັນເຈົ້າ ໃຫ້ເປັນຜູ້ທີ່ໄວ້ໃຈໄດ້. 26ຍ້ອນ
ຄວາມຍາກລຳບາກທີ່ມີຢູ່ແລ້ວ[ຄ] ເຮົາຈຶ່ງຄຶດເຫັນວ່າ ຄວນໃຫ້ທຸກຄົນຢູ່ຕາມຢ່າງທີ່ຕົນຢູ່ດຽວນີ້ກໍ
ດີຢູ່. 27ຖ້າເຈົ້າມີເມຍແລ້ວ ຢ່າຊອກຫາທາງແຍກຈາກກັນ ຖ້າເຈົ້າແຍກຈາກເມຍແລ້ວ ຢ່າຊອກ
ຫາເມຍໃໝ່. 28ແຕ່ຖ້າເຈົ້າແຕ່ງງານກໍບໍ່ຜິດ ແລະຖ້າຍິງໂສດຈະແຕ່ງງານກໍບໍ່ຜິດ ແຕ່ຄົນທີ່
ແຕ່ງງານຢ່າງນັ້ນຄົງຈະມີຄວາມຫຍຸ້ງຍາກລຳບາກໃຈໃນຊີວິດນີ້ ແຕ່ເຮົາປາດຖະໜາທີ່ຈະໃຫ້
ເຈົ້າທັງຫລາຍພົ້ນຈາກຄວາມຫຍຸ້ງຍາກນັ້ນ. 29ພີ່ນ້ອງທັງຫລາຍເອີຍ, ເຮົາກ່າວດັ່ງນີ້ກໍເພາະເວ-
ລາທີ່ເຫລືອຢູ່ນັ້ນກໍສັ້ນເຂົ້າມາແລ້ວ ຕັ້ງແຕ່ນີ້ໄປໃຫ້ຜູ້ມີເມຍດຳເນີນຊີວິດເໝືອນບໍ່ມີເມຍ. 30ໃຫ້ຜູ້
ທີ່ຮ້ອງໄຫ້ເໝືອນບໍ່ຮ້ອງໄຫ້ ແລະຜູ້ທີ່ຊົມຊື່ນຍິນດີເໝືອນບໍ່ຊົມຊື່ນຍິນດີ ແລະຜູ້ທີ່ຊື້ເໝືອນບໍ່ໄດ້
ສິ່ງໃດ. 31ແລະໃຫ້ຜູ້ທີ່ໃຊ້ຂອງໃນໂລກເໝືອນກັບວ່າເໝືອນກັບວ່າບໍ່ໄດ້ໃຊ້ເຕັມສ່ວນ ດ້ວຍວ່າ
ລະບົບຂອງໂລກນີ້ກຳລັງລ່ວງໄປ.

32ເຮົາຢາກໃຫ້ເຈົ້າທັງຫລາຍພົ້ນຈາກຄວາມກະວົນກະວາຍໃຈ ຝ່າຍຜູ້ທີ່ບໍ່ມີເມຍກໍຮ້ອນໃຈໃນ

---

[ກ]ພາສາເດີມວ່າ "ຍ້ອນພີ່ນ້ອງນັ້ນ." [ຂ]ຫລືວ່າ "ແມ່ນວ່າເຈົ້າຈະພົ້ນຈາກການເປັນຂ້ອຍຂ້າໄດ້ນັ້ນ ຄວນ
ດຳເນີນໃນຖານະເກົ່າດີກວ່າ." [ຄ]ຫລືວ່າ "ທີ່ຄວນຈະເກີດມີມາ."

ການງານຂອງອົງພຣະຜູ້ເປັນເຈົ້າ ເພື່ອຈະເຮັດໃຫ້ຊອບພຣະໄທຂອງພຣະອົງ. 33ແຕ່ຜູ້ທີ່ມີເມຍ
ແລ້ວກໍຮ້ອນໃຈໃນການຂອງໂລກນີ້ ເພື່ອຈະເຮັດໃຫ້ຊອບໃຈຂອງເມຍ ຈຶ່ງມີຄວາມສົນໃຈເປັນ
ສອງກ້ຳສອງຝ່າຍ. 34ຝ່າຍຍິງທີ່ບໍ່ມີຜົວແລະສາວໂສດກໍຮ້ອນໃຈໃນການງານຂອງອົງພຣະຜູ້-
ເປັນເຈົ້າ ເພື່ອຈະໄດ້ເປັນຄົນບໍລິສຸດທັງກາຍແລະຈິດວິນຍານ ແຕ່ຍິງທີ່ມີຜົວກໍຮ້ອນໃຈໃນການ
ຂອງໂລກນີ້ ເພື່ອຈະເຮັດໃຫ້ຊອບໃຈຂອງຜົວ. 35ເຮົາກ່າວດັ່ງນີ້ກໍເພື່ອປະໂຫຍດຂອງເຈົ້າທັງ-
ຫລາຍເອງ ບໍ່ໃຊ່ຈະຫ້າງແຮ້ວໃສ່ພວກເຈົ້າ[ກ] ແຕ່ເພື່ອການເປັນລະບຽບໃຫ້ພວກເຈົ້າບົວລະບັດ
ອົງພຣະຜູ້ເປັນເຈົ້າ ໂດຍບໍ່ມີໃຈເປັນສອງກ້ຳສອງຝ່າຍ.

36ຖ້າຊາຍໃດມີຄູ່ໝັ້ນເປັນສາວປອດ ແລະຮູ້ສຶກວ່າຕົນຈະປະຕິບັດຕໍ່ຄູ່ໝັ້ນຢ່າງສົມຄວນບໍ່ໄດ້
ແລ້ວ ຖ້າມີຄວາມຮັກຮ້ອນແຮງຈຶ່ງຕ້ອງເຮັດຢ່າງໃດຢ່າງໜຶ່ງ[ຂ] ກໍໃຫ້ເຂົາເຮັດຕາມຄວາມປາດ-
ຖະໜາ ຄືໃຫ້ເຂົາແຕ່ງງານເສຍ ບໍ່ມີຄວາມຜິດອັນໃດ. 37ແຕ່ຖ້າຊາຍຄົນໃດຕັ້ງໃຈຄັກແນ່ ແລະ
ເຫັນວ່າບໍ່ມີຄວາມຈຳເປັນ ແຕ່ອາດບັງຄັບໃຈຕົນເອງໄດ້ ດ້ວຍຕັ້ງໃຈວ່າຈະໃຫ້ຍິງນັ້ນເປັນຄູ່ໝັ້ນ
ຕໍ່ໄປ ຜູ້ນັ້ນກໍເຮັດດີຢູ່. 38ເຫດສັນນັ້ນຜູ້ໃດທີ່ແຕ່ງງານກັບຄູ່ໝັ້ນຂອງຕົນກໍເຮັດດີຢູ່ ແຕ່ຜູ້ທີ່ບໍ່
ແຕ່ງງານນັ້ນກໍເຮັດດີກວ່າ.

39ຕາບໃດຜົວຍັງມີຊີວິດຢູ່ ເມຍຕ້ອງຢູ່ກັບຜົວ ຖ້າຜົວຕາຍຍິງກໍເປັນອິດສະຫລະ ຈະແຕ່ງ-
ງານກັບຊາຍໃດກໍໄດ້ຕາມໃຈ ແຕ່ຕ້ອງແຕ່ງງານກັບຜູ້ທີ່ເຊື່ອໃນອົງພຣະຜູ້ເປັນເຈົ້າ. 40ແຕ່ຕາມ
ເຮົາເຫັນວ່າ ຖ້ານາງຢູ່ຜູ້ດຽວກໍຈະເປັນສຸກກວ່າ ແລະເຮົາຄຶດວ່າພຣະວິນຍານຂອງພຣະເຈົ້າ
ຊົງສະຖິດຢູ່ນຳເຮົາດ້ວຍ.

# ບົດທີ 8

## ເລື່ອງອາຫານທີ່ຖວາຍແກ່ພຣະທຽມ

1ເລື່ອງຂອງທີ່ເຂົາເອົາບູຊາແກ່ພຣະທຽມນັ້ນ ເຮົາທັງຫລາຍຮູ້ຢູ່ວ່າ "ພວກເຮົາຕ່າງກໍມີຄວາມ
ຮູ້ທຸກຄົນ" ຄວາມຮູ້ນັ້ນເຮັດໃຫ້ອວດຕົວ ແຕ່ຄວາມຮັກເຮັດໃຫ້ຈະເລີນຂຶ້ນ. 2ຖ້າຜູ້ໃດຖືວ່າຕົວຮູ້
ສິ່ງໃດແລ້ວ ຜູ້ນັ້ນຍັງບໍ່ຮູ້ອັນໃດຕາມທີ່ຄວນຈະຮູ້. 3ແຕ່ວ່າຖ້າຜູ້ໃດຮັກພຣະເຈົ້າ ພຣະເຈົ້າກໍຊົງ
ຮູ້ຈັກຜູ້ນັ້ນ.

4ເລື່ອງການກິນອາຫານທີ່ເຂົາເອົາບູຊາແກ່ພຣະທຽມນັ້ນ ເຮົາທັງຫລາຍຮູ້ຢູ່ວ່າ "ພຣະທຽມ
ນັ້ນບໍ່ເປັນຂອງແທ້" ແລະ "ມີພຣະເຈົ້າແທ້ແຕ່ອົງດຽວ." 5ເຖິງແມ່ນວ່າມີພະຫລາຍໃນສະຫວັນ
ແລະເທິງແຜ່ນດິນໂລກກໍດີ ທີ່ເຂົາເອີ້ນວ່າພຣະເຈົ້າ (ພະກໍມີຫລາຍ ເຈົ້າກໍມີຫລາຍແທ້). 6ແຕ່
ສຳລັບພວກເຮົານັ້ນມີພຣະເຈົ້າອົງດຽວຄືພຣະບິດາ ແລະສິ່ງສາລະພັດທັງປວງເກີດມາຈາກ
ພຣະອົງ ແລະພວກເຮົາເປັນມາເພື່ອພຣະອົງ ແລະມີອົງພຣະຜູ້ເປັນເຈົ້າອົງດຽວ ຄືພຣະເຢຊູ-
ຄຣິດ ແລະສິ່ງສາລະພັດກໍບັງເກີດຂຶ້ນໂດຍພຣະອົງ ແລະເຮົາກໍເປັນມາໂດຍພຣະອົງ.

7ແຕ່ບໍ່ໃຊ່ທຸກຄົນມີຄວາມຮູ້ຢ່າງນີ້ ເພາະມີບາງຄົນທີ່ເຄີຍນັບຖືພຣະທຽມແຕ່ກ່ອນຈົນເຖິງບັດ
ນີ້ ເມື່ອເຂົາກິນອາຫານນັ້ນກໍຖືວ່າເປັນຂອງບູຊາແກ່ພຣະທຽມນັ້ນແທ້ ແລະໃຈສຳນຶກຜິດແລະ

---

[ກ]ພາສາເດີມວ່າ "ບໍ່ໃຊ່ຈະເອົາເຊືອກຖິ້ມພາດຫລັງພວກເຈົ້າ." [ຂ]ອາດຈະເປັນທຳນຽມໃນຄຣິສຕະຈັກທີ່
ເມືອງໂກຣິນໂທ ໃຫ້ຊາຍກັບຍິງຢູ່ນຳກັນໂດຍບໍ່ຮູ້ຈັກຮ່ວມເພດກັນ.

ຊອບຂອງເຂົາຍັງອ່ອນຢູ່ຈຶ່ງຖືກຊົ່ວມົວໝອງໄປ. 8ອາຫານບໍ່ແມ່ນສິ່ງທີ່ເຮັດໃຫ້ພວກເຮົາເປັນທີ່
ຊອບພຣະໄທພຣະເຈົ້າ ຖ້າບໍ່ກິນເຮົາກໍບໍ່ໄດ້ຊົ່ວລົງ ຖ້າກິນເຮົາກໍບໍ່ດີຂຶ້ນ. 9ແຕ່ຈົ່ງລະວັງໃຫ້ດີ
ຢ່າໃຫ້ການໃຊ້ເສລີພາບຂອງເຈົ້າທັງຫລາຍ ເປັນເຫດໃຫ້ຄົນທີ່ມີຄວາມເຊື່ອນ້ອຍສະດຸດໃຈ.
10ເພາະວ່າຖ້າຜູ້ໃດຫາກມາເຫັນເຈົ້າຜູ້ມີຄວາມຮູ້ ນັ່ງກິນໃນວິຫານຂອງພຣະທຽມນັ້ນ ໃຈສຳນຶກ
ຜິດແລະຊອບອັນອ່ອນຂອງຜູ້ນັ້ນຈະບໍ່ກ້າຂຶ້ນ ເຮັດໃຫ້ບັງອາດກິນຂອງທີ່ບູຊາແກ່ພຣະທຽມນັ້ນ
ຫລື. 11ດັ່ງນັ້ນຄວາມຮູ້ຂອງເຈົ້າຈະເຮັດໃຫ້ພີ່ນ້ອງທີ່ມີຄວາມເຊື່ອອ່ອນ ຊຶ່ງພຣະຄຣິດໄດ້ຊົງ
ວາຍພຣະຊົນເພື່ອນັ້ນຕ້ອງຈິບຫາຍໄປ. 12ສັນນັ້ນເມື່ອພວກເຈົ້າເຮັດຜິດຕໍ່ພວກພີ່ນ້ອງ ຄືເຮັດ
ຮ້າຍແກ່ໃຈສຳນຶກຜິດແລະຊອບອັນອ່ອນຂອງເຂົານັ້ນ ເຈົ້າກໍໄດ້ເຮັດຜິດຕໍ່ພຣະຄຣິດດ້ວຍ.
13ເຫດສັນນັ້ນຖ້າອາຫານເປັນເຫດທີ່ເຮັດໃຫ້ພີ່ນ້ອງຂອງເຮົາສະດຸດໃຈເຮົາກໍຈະບໍ່ກິນຊີ້ນຕະ-
ຫລອດໄປ ເພາະຢ້ານວ່າຈະເຮັດໃຫ້ພີ່ນ້ອງສະດຸດໃຈ.

# ບົດທີ 9

## ສິດຂອງອັກຄະສາວົກ

1ເຮົາບໍ່ໄດ້ມີເສລີພາບຫລື ເຮົາບໍ່ໄດ້ເປັນອັກຄະສາວົກຫລື ເຮົາບໍ່ໄດ້ເຫັນພຣະເຢຊູອົງພຣະ-
ຜູ້ເປັນເຈົ້າຂອງເຮົາທັງຫລາຍຫລື ເຈົ້າທັງຫລາຍບໍ່ເປັນຜົນງານຂອງເຮົາໃນອົງພຣະຜູ້ເປັນເຈົ້າ
ຫລື. 2ຖ້າເຮົາບໍ່ໄດ້ເປັນອັກຄະສາວົກໃນສາຍຕາຂອງຄົນອື່ນ ເຮົາກໍເປັນອັກຄະສາວົກໃນສາຍ-
ຕາຂອງເຈົ້າທັງຫລາຍແທ້ ເພາະວ່າເຈົ້າທັງຫລາຍຄືກາປະຈຳຕຳແໜ່ງອັກຄະສາວົກຂອງເຮົາ
ໃນອົງພຣະຜູ້ເປັນເຈົ້າ. 3ຖ້າຜູ້ໃດສອບສວນເຮົາ ເຮົາກໍຈະແກ້ຕົວວ່າ. 4ເຮົາບໍ່ມີສິດທີ່ຈະກິນ
ແລະດື່ມຫລື. 5ເຮົາບໍ່ມີສິດຫລືທີ່ຈະພາເມຍທີ່ເປັນຄຣິສະຕຽນໄປມາດ້ວຍກັນ ເໝືອນຢ່າງອັກ
ຄະສາວົກຄົນອື່ນ ແລະເໝືອນຢ່າງພວກນ້ອງຂອງອົງພຣະຜູ້ເປັນເຈົ້າ ແລະເໝືອນຢ່າງເກຟາ
ນັ້ນ. 6ຈຳເພາະແຕ່ເຮົາກັບບາລະນາບາເທົ່ານັ້ນຫລື ທີ່ບໍ່ມີສິດຈະເລີກເຮັດການຫາລ້ຽງຊີບນັ້ນ.
7ແມ່ນໃຜທີ່ຮັບໃຊ້ເປັນທະຫານຕ້ອງກິນອາຫານຂອງຕົນເອງ ຜູ້ໃດທີ່ເຮັດສວນອະງຸ່ນແລ້ວບໍ່ໄດ້
ກິນຜົນຈາກສວນນັ້ນ ຫລືຜູ້ໃດທີ່ລ້ຽງສັດແລ້ວບໍ່ໄດ້ກິນນ້ຳນົມຈາກຝູງສັດນັ້ນ. 8ເຮົາກ່າວຢ່າງນີ້
ຕາມທຳນຽມຂອງມະນຸດຫລື ພຣະບັນຍັດບໍ່ໄດ້ກ່າວຢ່າງນີ້ເໝືອນກັນຫລື. 9ເພາະມີຄຳຂຽນໄວ້
ແລ້ວໃນບັນຍັດຂອງໂມເຊວ່າ, “ຢ່າເອົາກະສອບໃສ່ສົບງົວເມື່ອມັນຢຽບເຂົ້າຢູ່” ພຣະເຈົ້າຊົງ
ເປັນຫ່ວງພຣະໄທນຳງົວນັ້ນຫລື. 10ພຣະອົງບໍ່ໄດ້ຊົງກ່າວເພື່ອປະໂຫຍດຂອງເຮົາທັງຫລາຍໂດຍ
ຈຳເພາະດອກຫລື ແທ້ຈິງຂໍ້ຄວາມນັ້ນຂຽນໄວ້ເພື່ອປະໂຫຍດຂອງພວກເຮົາ ດ້ວຍວ່າຄົນທີ່ໄຖ
ນາກໍຄວນໄຖດ້ວຍຄວາມຫວັງໃຈ ແລະຄົນທີ່ຟາດເຂົ້າກໍຄວນຟາດເຂົ້າດ້ວຍຄວາມຫວັງຈະໄດ້
ສ່ວນແບ່ງຂອງເຂົ້ານັ້ນ. 11ຖ້າພວກເຮົາໄດ້ຫວ່ານແນວປູກຝ່າຍວິນຍານໃຫ້ເຈົ້າທັງຫລາຍຈະ
ເປັນການຫລາຍເກີນໄປຫລື ທີ່ພວກເຮົາຈະກ່ຽວຂອງຝ່າຍເນື້ອກາຍຈາກພວກເຈົ້າ. 12ຖ້າຄົນອື່ນ
ມີສິດທີ່ຈະໄດ້ຮັບປະໂຫຍດຈາກພວກເຈົ້າ ພວກເຮົາບໍ່ມີສິດທີ່ຈະໄດ້ຮັບຫລາຍວ່ານັ້ນອີກຫລື.

ເຖິງປານນັ້ນພວກເຮົາກໍບໍ່ໄດ້ໃຊ້ສິດນັ້ນ ແຕ່ໄດ້ຍອມອົດທົນເອົາທຸກສິ່ງ ເພາະຢ້ານວ່າເຮົາ
ຈະເປັນຜູ້ກໍ່ເຫດໃດເຫດໜຶ່ງຂຶ້ນຂັດຂວາງຂ່າວປະເສີດເລື່ອງພຣະຄຣິດ. 13ເຈົ້າທັງຫລາຍບໍ່ຮູ້ຫລື

ວ່າ ຄົນທີ່ປະຕິບັດໃນພຣະວິຫານກໍກິນຂອງຖວາຍໃນພຣະວິຫານນັ້ນ ແລະຄົນທີ່ປະຕິບັດແທ່ນ
ບູຊາກໍຮັບສ່ວນແບ່ງຂອງເຄື່ອງບູຊານັ້ນ. 14ຢ່າງດຽວກັນ, ອົງພຣະຜູ້ເປັນເຈົ້າໄດ້ຊົງບັນຊາໄວ້
ວ່າ ຄົນທີ່ປະກາດຂ່າວປະເສີດຄວນໄດ້ຮັບການລ້ຽງຊີບດ້ວຍຂ່າວປະເສີດນັ້ນ. 15ແຕ່ເຮົາບໍ່ໄດ້
ໃຊ້ສິດເຫລົ່ານັ້ນຈັກຢ່າງ ທີ່ເຮົາຂຽນເລື່ອງນີ້ກໍບໍ່ໃຊ່ເພື່ອຈະໃຫ້ເຂົາເຮັດຢ່າງນັ້ນແກ່ເຮົາ ດ້ວຍວ່າ
ເຮົາຍອມຕາຍເສຍກໍດີກວ່າທີ່ຈະ[ກ] ... ຢ່າໃຫ້ຜູ້ໃດທຳລາຍເຫດແຫ່ງການອວດອ້າງຂອງເຮົາ.
16ເພາະການທີ່ເຮົາປະກາດຂ່າວປະເສີດນັ້ນ ເຮົາບໍ່ມີເຫດທີ່ຈະອວດອ້າງໄດ້ ເພາະຄວາມຈຳ-
ເປັນໄດ້ຕົກໃສ່ເຮົາ ວິບັດຈະເກີດມີແກ່ເຮົາຖ້າເຮົາບໍ່ປະກາດຂ່າວປະເສີດ. 17ເພາະຖ້າເຮົາເຮັດ
ການນັ້ນດ້ວຍໃຈສະໝັກເຮົາກໍຈະໄດ້ບຳເໜັດ ແຕ່ຖ້າເຮົາບໍ່ສະໝັກກໍຍັງເປັນການທີ່ຊົງມອບໄວ້
ໃຫ້ເຮົາເຮັດ. 18ແລ້ວບຳເໜັດຂອງເຮົາຄືອັນໃດ ຄືເມື່ອເຮົາປະກາດຂ່າວປະເສີດນັ້ນເຮົາບໍ່ໄດ້ຄິດ
ຄ່າ ແລະບໍ່ໄດ້ໃຊ້ສິດຂອງເຮົາໃນຂ່າວປະເສີດນັ້ນຢ່າງຄົບຖ້ວນ.

19ເຖິງແມ່ນວ່າເຮົາບໍ່ໄດ້ຢູ່ໃນບັງຄັບຂອງຜູ້ໃດ ເຮົາກໍຍັງຍອມຕົວເປັນຜູ້ຮັບໃຊ້[ຂ] ຂອງຄົນທັງ
ປວງ ເພື່ອຈະໄດ້ນຳຄົນຈຳນວນຫລວງຫລາຍມາເປັນສິດ. 20ຕໍ່ຄົນຢິວເຮົາໄດ້ເຮັດເໝືອນຄົນ
ຢິວ ເພື່ອຈະໄດ້ໃຈຄົນຢິວ ຕໍ່ຄົນທີ່ຢູ່ໃຕ້ພຣະບັນຍັດເຮົາກໍເຮັດເໝືອນຄົນທີ່ຢູ່ໃຕ້ພຣະບັນຍັດ
(ເຖິງແມ່ນເຮົາເອງບໍ່ຢູ່ໃຕ້ພຣະບັນຍັດກໍດີ) ເພື່ອຈະໄດ້ໃຈຄົນທັງຫລາຍທີ່ຢູ່ໃຕ້ພຣະບັນຍັດນັ້ນ.
21ຕໍ່ຄົນທີ່ຢູ່ນອກພຣະບັນຍັດເຮົາກໍເຮັດເໝືອນຄົນທີ່ຢູ່ນອກພຣະບັນຍັດ (ເຖິງແມ່ນເຮົາບໍ່ຢູ່ນອກ
ພຣະບັນຍັດຂອງພຣະເຈົ້າກໍດີ ແຕ່ເຮົາຢູ່ໃຕ້ພຣະບັນຍັດຂອງພຣະຄຣິດ) ເພື່ອຈະໄດ້ໃຈຄົນ
ທັງຫລາຍທີ່ຢູ່ນອກພຣະບັນຍັດນັ້ນ. 22ຕໍ່ຄົນທີ່ອ່ອນແອເຮົາກໍເຮັດເໝືອນຄົນອ່ອນແອ ເພື່ອຈະ
ໄດ້ໃຈຄົນອ່ອນແອ ເຮົາຍອມເປັນຄົນທຸກຊະນິດເພາະເຫັນແກ່ຄົນທັງປວງ ເພື່ອເຮົາຈະໄດ້ຊ່ອຍ
ບາງຄົນໃຫ້ພົ້ນດ້ວຍທຸກວິທີທາງ.

23ເຮົາເຮັດຕາມສິ່ງເຫລົ່ານີ້ເພາະເຫັນແກ່ຂ່າວປະເສີດເພື່ອເຮົາຈະໄດ້ມີສ່ວນໃນຂ່າວປະເສີດ
ນັ້ນ.

24ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ຄົນເຫລົ່ານັ້ນທີ່ແລ່ນແຂ່ງກັນ ກໍແລ່ນດ້ວຍກັນທຸກຄົນ ແຕ່ຄົນທີ່
ໄດ້ຮັບລາງວັນມີແຕ່ຄົນດຽວ ເຫດສັນນັ້ນຈົ່ງແລ່ນເພື່ອຊິງເອົາຮາງວັນໃຫ້ໄດ້. 25ຝ່າຍນັກກິລາ
ທຸກຄົນກໍເຄັ່ງຄັດໃນລະບຽບທຸກຢ່າງ ເຂົາເຮັດຢ່າງນັ້ນກໍເພື່ອຈະໄດ້ພວງມາໄລທີ່ຫ່ຽວແຫ້ງໄປ
ແຕ່ເຮົາເຮັດເພື່ອຈະໄດ້ພວງມາໄລອັນບໍ່ຫ່ຽວແຫ້ງໄປ.

26ດ້ວຍເຫດນັ້ນເຮົາຈຶ່ງແລ່ນເສັງໂດຍມີເປົ້າໝາຍ ເຮົາບໍ່ໄດ້ຕໍ່ສູ້ຢ່າງນັກມວຍທີ່ຊົກລົມ. 27ແຕ່
ເຮົາກໍທຸບຕີຮ່າງກາຍຂອງເຮົາໃຫ້ມັນແຂງຢູ່ຄາມືເພາະຢ້ານວ່າເມື່ອເຮົາໄດ້ປະກາດແກ່ຄົນອື່ນ
ແລ້ວ ເຮົາເອງຈະຖືກຂ້າຊື່ອອກຈາກການແຂ່ງຂັນ.

# ບົດທີ 10

## ຕັກເຕືອນບໍ່ໃຫ້ນັບຖືພຣະທຽມ

1ພີ່ນ້ອງທັງຫລາຍເອີຍ, ເຮົາຢາກໃຫ້ເຈົ້າທັງຫລາຍເຂົ້າໃຈວ່າ ພວກບັນພະບຸລຸດຂອງເຮົາ

[ກ]ປະໂຫຍກທີ່ບໍ່ຄົບຖ້ວນ ຄືຂາດຄວາມວ່າ "ເຮັດຢ່າງນັ້ນ" ແຕ່ວ່າສຳເນົາກົກພາກບໍ່ມີຂໍ້ຄວາມດັ່ງກ່າວ.
[ຂ]ພາສາເດີມວ່າ "ຂ້ອຍໃຊ້."

ທັງຫລາຍໄດ້ຢູ່ໃຕ້ເມກ, ແລະໄດ້ຜ່ານທະເລໄປທຸກຄົນ. [2]ແລະໄດ້ຮັບບັບຕິສະມາໃນເມກແລະ
ໃນທະເລຮ່ວມກັບໂມເຊທຸກຄົນ. [3]ໄດ້ຮັບປະທານອາຫານທິບຢ່າງດຽວກັນທຸກຄົນ. [4]ແລະໄດ້
ດື່ມນ້ຳທິບຢ່າງດຽວກັນທຸກຄົນ ດ້ວຍວ່າເຂົາເຄີຍໄດ້ດື່ມນ້ຳໄຫລອອກມາຈາກສີລາສັກສິດທີ່ຕາມ
ເຂົາໄປ ສີລານັ້ນແມ່ນອົງພຣະຄຣິດ. [5]ແຕ່ເຖິງປານນັ້ນກໍດີ, ມີຄົນສ່ວນຫລາຍໃນພວກນັ້ນທີ່
ພຣະເຈົ້າບໍ່ຊົງພໍພຣະໄທ ເຮົາຮູ້ໄດ້ກໍເພາະວ່າເຂົາລົ້ມຕາຍໃນປ່າບໍ່ຂາດສາຍ. [6]ເຫດການເຫລົ່າ
ນີ້ເປັນຕົວຢ່າງເຕືອນໃຈເຮົາທັງຫລາຍ ບໍ່ໃຫ້ພວກເຮົາມີໃຈໂລບແລະປາດຖະໜາສິ່ງຊົ່ວເໝືອນ
ເຂົາເຫລົ່ານັ້ນ. [7]ຢ່າກາຍເປັນຄົນຂາບໄຫວ້ພຣະທຽມເໝືອນບາງຄົນໃນພວກເຂົາ ຕາມມີຄຳ
ຂຽນໄວ້ໃນພຣະຄຳພີວ່າ, “ໄພ່ພົນທັງຫລາຍໄດ້ນັ່ງລົງກິນແລະດື່ມ ແລ້ວກໍລຸກຂຶ້ນເຕັ້ນລຳ.” [8]ຢ່າ
ໃຫ້ເຮົາທັງຫລາຍຫລິ້ນຜິດຊາຍຍິງ ເໝືອນບາງຄົນໃນພວກນັ້ນໄດ້ເຮັດ ແລ້ວກໍລົ້ມລົງຕາຍໃນມື້
ດຽວສອງໝື່ນສາມພັນຄົນ. [9]ຢ່າໃຫ້ພວກເຮົາທົດລອງອົງພຣະຜູ້ເປັນເຈົ້າ ເໝືອນຢ່າງທີ່ບາງ
ຄົນໃນພວກນັ້ນໄດ້ທົດລອງ ແລ້ວກໍໄດ້ຈິບຫາຍໄປດ້ວຍພິດງູ. [10]ເຈົ້າທັງຫລາຍຢ່າຈົ່ມເໝືອນ
ບາງຄົນໃນພວກເຂົາໄດ້ຈົ່ມ ແລ້ວກໍໄດ້ຈິບຫາຍໄປດ້ວຍເພັດຊະຄາດ. [11]ເຫດການເຫລົ່ານີ້ໄດ້
ບັງເກີດຂຶ້ນແກ່ເຂົາເພື່ອເປັນຕົວຢ່າງແກ່ຜູ້ອື່ນ ແລະໄດ້ບັນທຶກໄວ້ເພື່ອເຕືອນສະຕິເຮົາທັງຫລາຍ
ຊຶ່ງກຳລັງປະສົບກັບເວລາສຸດທ້າຍທີ່ຈວນຈະມາເຖິງ. [12]ເຫດສັນນັ້ນຜູ້ທີ່ຄຶດວ່າຕົວຕັ້ງໝັ້ນຢູ່ແລ້ວ
ຈົ່ງລັງວັງໃຫ້ດີຢ້ານວ່າຈະລົ້ມລົງ. [13]ບໍ່ມີການທົດລອງອັນໃດເກີດຂຶ້ນກັບເຈົ້າທັງຫລາຍ ນອກ-
ຈາກການທົດລອງທີ່ເຄີຍເກີດກັບມະນຸດທົ່ວໄປ ພຣະເຈົ້າຊົງທ່ຽງທຳ ພຣະອົງຈະບໍ່ຊົງຍອມໃຫ້
ພວກເຈົ້າຖືກທົດລອງເກີນກວ່າທີ່ເຈົ້າຈະທົນໄດ້ ແລະເມື່ອຊົງທົດລອງເຈົ້ານັ້ນ ພຣະອົງຈະຊົງ
ໂຜດໃຫ້ເຈົ້າມີທາງຫລີກໜີໄປໄດ້ດ້ວຍ ເພື່ອເຈົ້າທັງຫລາຍຈະສາມາດທົນໄດ້.

[14]ເຫດສັນນັ້ນພວກທີ່ຮັກຂອງເຮົາເອີຍ, ຈົ່ງຫລີກໜີຈາກການຂາບໄຫວ້ພຣະທຽມ. [15]ເຮົາເວົ້າ
ເໝືອນດັ່ງເວົ້າກັບຄົນທີ່ມີປັນຍາ ເຈົ້າທັງຫລາຍຈົ່ງພິຈາລະນາເອົາໃນເລື່ອງທີ່ເຮົາເວົ້ານັ້ນ.
[16]ຈອກແຫ່ງພຣະພອນຊຶ່ງເຮົາຂໍພຣະພອນນັ້ນ ເປັນສິ່ງທີ່ເຮັດໃຫ້ພວກເຮົາມີສ່ວນຮ່ວມໃນພຣະ-
ໂລຫິດຂອງພຣະຄຣິດ ບໍ່ແມ່ນຫລື ເຂົ້າຈີ່ຊຶ່ງເຮົາຫັກນັ້ນ ເປັນສິ່ງທີ່ເຮັດໃຫ້ພວກເຮົາມີສ່ວນ
ຮ່ວມໃນພຣະກາຍຂອງພຣະຄຣິດ ບໍ່ແມ່ນຫລື. [17]ເຖິງແມ່ນວ່າພວກເຂົາມີຫລາຍຄົນ ແຕ່ເນື່ອງ
ຈາກມີເຂົ້າຈີ່ກ້ອນດຽວ ພວກເຮົາຈຶ່ງເປັນຮ່າງກາຍອັນດຽວ[ກ] ເພາະວ່າທຸກຄົນໄດ້ຮັບປະທານ
ເຂົ້າຈີ່ກ້ອນດຽວກັນ. [18]ຈົ່ງພິຈາລະນາເບິ່ງຕົວຢ່າງພວກອິສຣາເອນ ຄົນທີ່ຮັບປະທານຂອງທີ່ບູ-
ຊາແລ້ວນັ້ນ ກໍມີສ່ວນຮ່ວມໃນແທ່ນບູຊານັ້ນ ບໍ່ແມ່ນຫລື. [19]ຖ້າເປັນດັ່ງນັ້ນ, ເຮົາໝາຍຄວາມວ່າ
ຢ່າງໃດ ຈະວ່າເຄື່ອງບູຊາທີ່ຖວາຍພຣະທຽມນັ້ນສັກສິກຫລື ຫລືວ່າພຣະທຽມນັ້ນເປັນສິ່ງສັກສິດ
ຫລື. [20]ບໍ່ແມ່ນດອກ ແຕ່ເຮົາໝາຍຄວາມວ່າເຄື່ອງບູຊາທີ່ພວກຕ່າງຊາດຖວາຍນັ້ນ ເຂົາຖວາຍ
ແກ່ຜີ ຄືແກ່ສິ່ງທີ່ບໍ່ແມ່ນພຣະເຈົ້າ ເຮົາບໍ່ຢາກໃຫ້ເຈົ້າທັງຫລາຍມີສ່ວນຮ່ວມກັບຜີ. [21]ເຈົ້າທັງ-
ຫລາຍຈະດື່ມແຕ່ຈອກຂອງອົງພຣະຜູ້ເປັນເຈົ້າແດ່ ແລະແຕ່ຈອກຂອງຜີແດ່ ກໍບໍ່ໄດ້ຈະຮັບປະ-
ທານຮ່ວມໂຕະຂອງອົງພຣະຜູ້ເປັນເຈົ້າແດ່ ແລະຂອງຜີແດ່ກໍບໍ່ໄດ້. [22]ເຮົາທັງຫລາຍຈະຍຸແຫຍ່
ໃຫ້ອົງພຣະຜູ້ເປັນເຈົ້າຊົງເຫິງສາຫລື ພວກເຮົາມີລິດຫລາຍກວ່າພຣະອົງຫລື.

[ກ]ຫລືວ່າ “ພວກເຮົາແມ່ນວ່າມີຫລາຍຄົນກໍຕາມ ກໍຍັງເປັນເຂົ້າຈີ່ກ້ອນດຽວ ແລະເປັນກາຍອັນດຽວ.”

23“ເຮົາເຮັດສິ່ງສາລະພັດໄດ້ ບໍ່ມີໃຜຫ້າມ” ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນເປັນປະໂຫຍດ
“ເຮົາເຮັດສິ່ງສາລະພັດໄດ້ ບໍ່ມີໃຜຫ້າມ” ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນຈະໃຫ້ຈະເລີນຂຶ້ນ.
24ຢ່າໃຫ້ຜູ້ໃດຫາປະໂຫຍດສ່ວນຕົວ ແຕ່ຈົ່ງເຫັນແກ່ປະໂຫຍດຂອງຄົນອື່ນ. 25ຊີ້ນທຸກຢ່າງທີ່ເຂົາ
ຂາຍຕາມຕະຫລາດນັ້ນກິນໄດ້ໂດຍບໍ່ຕ້ອງຖາມສິ່ງໃດ ເພາະເຫັນແກ່ໃຈສຳນຶກຜິດແລະຊອບ.
26ດ້ວຍວ່າ, “ແຜ່ນດິນໂລກກັບສັບພະສິ່ງໃນໂລກນັ້ນເປັນຂອງອົງພຣະຜູ້ເປັນເຈົ້າ.” 27ຖ້າຄົນທີ່
ບໍ່ມີຄວາມເຊື່ອເຊີນເຈົ້າໄປກິນລ້ຽງແລະເຈົ້າກໍເຕັມໃຈໄປ ສິ່ງໃດທີ່ເຂົາຈັດໃຫ້ກິນກໍກິນໄດ້ ບໍ່
ຕ້ອງຖາມສິ່ງໃດເພາະເຫັນແກ່ໃຈສຳນຶກຜິດແລະຊອບ. 28ແຕ່ຖ້າມີຜູ້ໃດບອກເຈົ້າວ່າ, “ຂອງນີ້
ເຂົາໄດ້ເອົາບູຊາແລ້ວ” ເຈົ້າຢ່າໄດ້ກິນເພາະເຫັນແກ່ຜູ້ທີ່ບອກນັ້ນ ແລະເພາະເຫັນແກ່ໃຈສຳນຶກ
ຜິດແລະຊອບ. 29(ເຮົາບໍ່ໄດ້ໝາຍເຖິງໃຈສຳນຶກຜິດແລະຊອບຂອງເຈົ້າ ແຕ່ໝາຍເຖິງໃຈສຳນຶກ
ຜິດແລະຊອບຂອງຄົນທີ່ບອກນັ້ນ). “ເປັນຫຍັງໃຈສຳນຶກຜິດແລະຊອບຂອງຄົນອື່ນ ຈະຕ້ອງມາ
ຂັດຂວາງເສລີພາບຂອງເຮົາ. 30ຖ້າເຮົາຮັບປະທານໂດຍຂອບພຣະຄຸນ ເປັນຫຍັງເຂົາຈຶ່ງຕິຕຽນ
ເຮົາເພາະສິ່ງທີ່ເຮົາໄດ້ຂອບພຣະຄຸນແລ້ວ.” 31ເຫດສັນນັ້ນເມື່ອເຈົ້າທັງຫລາຍຈະກິນ, ຈະດື່ມ,
ຫລືຈະເຮັດສິ່ງໃດກໍດີ ຈົ່ງເຮັດທຸກສິ່ງເພື່ອຖວາຍພຣະກຽດແດ່ພຣະເຈົ້າ. 32ຢ່າເປັນຕົ້ນເຫດທີ່
ເຮັດໃຫ້ພວກຢິວ, ພວກຕ່າງຊາດ, ຫລືຄຣິສຕະຈັກຂອງພຣະເຈົ້າສະດຸດໃຈ. 33ເໝືອນດັ່ງເຮົາ
ເອງເຄີຍເຮັດທຸກຢ່າງໃຫ້ເປັນທີ່ພໍໃຈຄົນທັງປວງ ໂດຍບໍ່ເຫັນແກ່ປະໂຫຍດສ່ວນຕົວ ແຕ່ເຫັນແກ່
ປະໂຫຍດຂອງຄົນທັງຫລາຍ ເພື່ອເຂົາຈະໄດ້ພົ້ນ.

# ບົດທີ 11

1ເຈົ້າທັງຫລາຍຈົ່ງປະຕິບັດຕາມແບບຢ່າງຂອງເຮົາ ເໝືອນເຮົາປະຕິບັດຕາມແບບຢ່າງຂອງ
ພຣະຄຣິດ.

## ເລື່ອງການປົກຫົວໃນທີ່ປະຊຸມ

2ເຮົາຊົມເຊີຍເຈົ້າທັງຫລາຍເພາະພວກເຈົ້າລະນຶກເຖິງເຮົາໃນທຸກສິ່ງ ແລະຖືຮັກສາຂໍ້ຄວາມທີ່
ສືບມານັ້ນ ຊຶ່ງເຮົາໄດ້ມອບໄວ້ແກ່ເຈົ້າທັງຫລາຍແລ້ວ. 3ແຕ່ເຮົາຢາກໃຫ້ເຈົ້າທັງຫລາຍເຂົ້າໃຈ
ວ່າ ພຣະຄຣິດຊົງເປັນປະມຸກຂອງຜູ້ຊາຍທຸກຄົນ, ແລະຜູ້ຊາຍເປັນປະມຸກຂອງແມ່ຍິງ, ແລະ
ພຣະປະມຸກຂອງພຣະຄຣິດກໍຄືພຣະເຈົ້າ. 4ຊາຍຄົນໃດທີ່ກຳລັງໄຫວ້ວອນຫລືປະກາດພຣະທຳ
ໂດຍໃຊ້ຜ້າປົກຫົວ ກໍເຮັດເສຍກຽດແກ່ປະມຸກຂອງຕົນ. 5ແຕ່ຜູ້ຍິງທີ່ກຳລັງໄຫວ້ວອນຫລືປະກາດ
ພຣະທຳໂດຍບໍ່ໃຊ້ຜ້າປົກຫົວ ກໍເຮັດເສຍກຽດແກ່ປະມຸກຂອງຕົນ ເພາະເໝືອນກັບວ່າຕົນໄດ້ແຖ
ຫົວແລ້ວ. 6ຖ້າຜູ້ຍິງບໍ່ໃຊ້ຜ້າປົກຫົວກໍຄວນຈະຕັດຜົມເສຍ ແຕ່ຖ້າການທີ່ຜູ້ຍິງຈະຕັດຜົມຫລືແຖ
ຫົວນັ້ນເປັນການເສຍກຽດແກ່ຕົນ ຈົ່ງໃຫ້ນາງເອົາຜ້າປົກຫົວເສຍ. 7ການທີ່ຜູ້ຊາຍບໍ່ສົມຄວນປົກ
ຫົວນັ້ນ ກໍເພາະຜູ້ຊາຍເປັນແບບພຣະລັກສະນະແລະພຣະກຽດຕິຍົດຂອງພຣະເຈົ້າ ແຕ່ສ່ວນຜູ້-
ຍິງນັ້ນເປັນກຽດຕິຍົດຂອງຜູ້ຊາຍ. 8(ເພາະວ່າບໍ່ໄດ້ຊົງສ້າງຜູ້ຊາຍຈາກຜູ້ຍິງ ແຕ່ຊົງສ້າງຜູ້ຍິງ
ຈາກຜູ້ຊາຍ. 9ແລະບໍ່ໄດ້ຊົງສ້າງຜູ້ຊາຍໄວ້ສຳລັບຜູ້ຍິງ ແຕ່ໄດ້ຊົງສ້າງຜູ້ຍິງໄວ້ສຳລັບຜູ້ຊາຍ).

10ເພາະເຫດນັ້ນຜູ້ຍິງຈຶ່ງຄວນຈະເອົາເຄື່ອງໝາຍແຫ່ງອຳນາດນີ້[ກ] ປົກຫົວໄວ້ ເພາະເຫັນແກ່
ພວກເທວະດາ. 11(ເຖິງປານນັ້ນກໍດີ, ໃນອົງພຣະຜູ້ເປັນເຈົ້າຜູ້ຊາຍກໍຕ້ອງເພິ່ງຜູ້ຍິງ ແລະຜູ້ຍິງ
ກໍຕ້ອງເພິ່ງຜູ້ຊາຍ. 12ດ້ວຍວ່າຜູ້ຍິງນັ້ນຊົງສ້າງມາຈາກຜູ້ຊາຍສັນໃດ ຕໍ່ມາຜູ້ຊາຍຈຶ່ງຕ້ອງເກີດ
ມາຈາກຜູ້ຍິງສັນນັ້ນ ແຕ່ສິ່ງສາລະພັດກໍມີມາຈາກພຣະເຈົ້າ). 13ເຈົ້າທັງຫລາຍຈົ່ງພິຈາລະນາ
ເອົາເອງວ່າ ເປັນການສົມຄວນຫລືທີ່ຜູ້ຍິງຈະບໍ່ໃຊ້ຜ້າປົກຫົວ ເມື່ອກຳລັງໄຫວ້ວອນຕໍ່ພຣະເຈົ້າ.
14ທຳມະຊາດບໍ່ໄດ້ສອນເຈົ້າທັງຫລາຍຫລືວ່າ ຖ້າຜູ້ຊາຍໄວ້ຜົມຍາວກໍເປັນທີ່ໜ້າອາຍ. 15ແຕ່ຖ້າ
ຜູ້ຍິງໄວ້ຜົມຍາວກໍເປັນກຽດແກ່ຕົນ ເພາະວ່າຜົມເປັນສິ່ງທີ່ຊົງປະທານໃຫ້ແກ່ນາງແທນຜ້າປົກ
ຫົວ. 16ແຕ່ຖ້າຜູ້ໃດຈະຖຽງໃນຂໍ້ນີ້ ຝ່າຍເຮົາແລະໝູ່ຄຣິສຕະຈັກຂອງພຣະເຈົ້າ ບໍ່ຮັບເອົາທຳ-
ນຽມຖຽງກັນຢ່າງນັ້ນ.

## ການຖືສິນມະຫາສະໜິດ

17ໃນຄຳສັ່ງຕໍ່ໄປນີ້ເຮົາບໍ່ຊົມເຊີຍເຈົ້າທັງຫລາຍດອກ ເພາະວ່າການປະຊຸມກັນຂອງພວກເຈົ້າ
ບໍ່ໄດ້ຈະເລີນຂຶ້ນ ແຕ່ໄດ້ຜົນໜ້ອຍລົງ. 18ເປັນຕົ້ນເຮົາໄດ້ຍິນວ່າເມື່ອຄຣິສຕະຈັກມາປະຊຸມກັນ
ກໍມີການແຕກເປັນພັກເປັນພວກໃນທ່າມກາງພວກເຈົ້າ ເລື່ອງນີ້ເຮົາກໍເຊື່ອວ່າຄົງມີຄວາມຈິງຢູ່
ແດ່. 19ເພາະຈຳເປັນຕ້ອງມີການຂັດແຍ້ງກັນຢູ່ແດ່ໃນທ່າມກາງພວກເຈົ້າ ເພື່ອພວກຝ່າຍຖືກໃນ
ພວກເຈົ້ານັ້ນຈະໄດ້ປະກົດແຈ້ງຂຶ້ນ. 20ເມື່ອເຈົ້າທັງຫລາຍປະຊຸມພ້ອມກັນນັ້ນ ຈຶ່ງບໍ່ແມ່ນການ
ຮ່ວມໂຕະຂອງອົງພຣະຜູ້ເປັນເຈົ້າ. 21ດ້ວຍວ່າເມື່ອພວກເຈົ້າຮັບປະທານນັ້ນ ຕ່າງຄົນກໍຟ້າວຮັບ
ກິນອາຫານຂອງຕົນກ່ອນ ບາງຄົນກໍບໍ່ອີ່ມ, ບາງຄົນກໍເມົາ. 22ດັ່ງນັ້ນເຈົ້າທັງຫລາຍບໍ່ມີເຮືອນທີ່
ຈະກິນແລະດື່ມຫລື ຫລືວ່າພວກເຈົ້າດູໝິ່ນຄຣິສຕະຈັກຂອງພຣະເຈົ້າ ແລະເຮັດໃຫ້ພວກຄົນທີ່
ຂັດສົນໄດ້ຮັບຄວາມອັບອາຍ ຈະໃຫ້ເຮົາເວົ້າຢ່າງໃດແກ່ເຈົ້າທັງຫລາຍ ຈະໃຫ້ເຮົາຊົມເຊີຍພວກ
ເຈົ້າຫລື ໃນທານນີ້ເຮົາຈະບໍ່ຊົມເຊີຍພວກເຈົ້າດອກ.

23ດ້ວຍວ່າເລື່ອງຊຶ່ງເຮົາໄດ້ມອບໄວ້ແກ່ເຈົ້າທັງຫລາຍນັ້ນ ເຮົາໄດ້ຮັບຈາກອົງພຣະຜູ້ເປັນເຈົ້າ
ຄືໃນຄືນທີ່ຢູດາໄດ້ທໍລະຍົດຕໍ່ພຣະອົງເຈົ້າເຢຊູນັ້ນ ພຣະອົງໄດ້ຊົງຈັບເອົາເຂົ້າຈີ່ມາ. 24ແລະ
ເມື່ອຂອບພຣະຄຸນແລ້ວຊົງຫັກເຂົ້າຈີ່ນັ້ນ ໂດຍຊົງກ່າວວ່າ, "ນີ້ແຫລະ, ຄືກາຍຂອງເຮົາຊຶ່ງໃຫ້
ສຳລັບພວກເຈົ້າ ຈົ່ງເຮັດຢ່າງນີ້ໃຫ້ເປັນທີ່ລະນຶກເຖິງເຮົາ." 25ເມື່ອຮັບປະທານເຂົ້າແລງແລ້ວ
ພຣະອົງໄດ້ຊົງຈັບເອົາຈອກດ້ວຍອາການຢ່າງດຽວກັນ ໂດຍຊົງກ່າວວ່າ, "ຈອກນີ້ຄືຄຳສັນຍາ
ໃໝ່ໂດຍເລືອດຂອງເຮົາ ເມື່ອເຈົ້າດື່ມຈາກຈອກນີ້ເວລາໃດ ຈົ່ງດື່ມເປັນທີ່ລະນຶກເຖິງເຮົາ."
26ເພາະວ່າເມື່ອເຈົ້າທັງຫລາຍກິນເຂົ້າຈີ່ນີ້ ແລະດື່ມຈາກຈອກນີ້ເວລາໃດ ເຈົ້າກໍປະກາດກາຍ
ວາຍພຣະຊົນຂອງອົງພຣະຜູ້ເປັນເຈົ້າ ຈົນກວ່າພຣະອົງຈະສະເດັດມາ.

27ເຫດສັນນັ້ນຖ້າຜູ້ໃດກິນເຂົ້າຈີ່ ຫລືດື່ມຈາກຈອກຂອງອົງພຣະຜູ້ເປັນເຈົ້າຢ່າງບໍ່ສົມຄວນ ຜູ້
ນັ້ນກໍຜິດຕໍ່ພຣະກາຍແລະຕໍ່ພຣະໂລຫິດຂອງອົງພຣະຜູ້ເປັນເຈົ້າ. 28ຂໍໃຫ້ທຸກຄົນພິຈາລະນາເບິ່ງ
ໃຈຂອງຕົນເອງ ແລ້ວຈຶ່ງກິນເຂົ້າຈີ່ແລະດື່ມນ້ຳຈາກຈອກນີ້. 29ດ້ວຍວ່າຜູ້ກິນແລະດື່ມໂດຍບໍ່ໄດ້
ສັງເກດເຖິງພຣະກາຍ ກໍກິນແລະດື່ມເປັນເຫດໃຫ້ຕົນຖືກພິພາກສາລົງໂທດ. 30ດ້ວຍເຫດນີ້ໃນ

---
[ກ]ສະໄໝນັ້ນເຄື່ອງໝາຍນັ້ນຄືຜ້າປົກຫົວ ຊຶ່ງໝາຍວ່າເປັນຄົນດີ. 11:7 ປຖກ 1:26-27.

ພວກເຈົ້າມີຫລາຍຄົນຈຶ່ງອ່ອນແຮງແລະປ່ວຍຢູ່ ແລະບາງຄົນກໍລ່ວງລັບໄປ. 31ຖ້າເຮົາທັງຫລາຍ
ພິຈາລະນາເບິ່ງໃຈຂອງຕົນ ພວກເຮົາຈະບໍ່ຖືກການຊົງພິພາກສາ. 32ເມື່ອເຮົາທັງຫລາຍຖືກທຳ
ໂທດໂດຍອົງພຣະຜູ້ເປັນເຈົ້ານັ້ນ ພວກເຮົາກໍຖືກພຣະອົງຊົງຕີສອນ ເພື່ອບໍ່ໃຫ້ເຮົາຖືກຊົງພິ-
ພາກສາລົງໂທດດ້ວຍກັນກັບໂລກ. 33ດັ່ງນີ້ແຫລະ, ພີ່ນ້ອງທັງຫລາຍເອີຍ, ເມື່ອເຈົ້າທັງຫລາຍ
ມາຮ່ວມປະຊຸມກັນຮັບປະທານອາຫານນັ້ນ ຈົ່ງຄອຍຖ້າເຊິ່ງກັນແລະກັນ. 34ຖ້າມີໃຜຫິວ ກໍໃຫ້ຜູ້
ນັ້ນກິນທີ່ເຮືອນຂອງຕົນເສຍ ເພື່ອເວລາມາປະຊຸມກັນເຈົ້າທັງຫລາຍຈະບໍ່ຖືກການຊົງພິພາກສາ
ລົງໂທດ ສ່ວນເລື່ອງອື່ນໆ ນັ້ນເມື່ອເຮົາມາ ເຮົາຈະແນະນຳໃຫ້.

# ບົດທີ 12

## ຂອງພຣະລາຊະທານຊຶ່ງມາຈາກພຣະວິນຍານ

1ພີ່ນ້ອງທັງຫລາຍເອີຍ, ເຮົາຢາກໃຫ້ພວກເຈົ້າເຂົ້າໃຈເລື່ອງຂອງພຣະລາຊະທານຊຶ່ງມາຈາກ
ພຣະວິນຍານນັ້ນ. 2ເຈົ້າທັງຫລາຍຮູ້ຢູ່ວ່າແຕ່ກ່ອນ, ເມື່ອພວກເຈົ້າຍັງເປັນຄົນນອກສາດສະໜາ
ນັ້ນ ພວກເຈົ້າໄດ້ຖືກຊັກນຳໃຫ້ຫລົງໄປຫາພຣະທຽມທີ່ປາກບໍ່ເປັນ ຕາມທີ່ມີຜູ້ຊັກນຳໄປນັ້ນ.
3ເຫດສັນນັ້ນເຮົາຈຶ່ງບອກເຈົ້າທັງຫລາຍໃຫ້ຮູ້ວ່າ ບໍ່ມີໃຜທີ່ຈະເວົ້າດ້ວຍພຣະວິນຍານຂອງພຣະ-
ເຈົ້າຈະກ່າວວ່າ, “ຂໍໃຫ້ພຣະເຢຊູຖືກດ່າ” ແລະບໍ່ມີໃຜອາດເວົ້າໄດ້ວ່າ, “ພຣະເຢຊູຊົງເປັນອົງ
ພຣະຜູ້ເປັນເຈົ້າ” ເວັ້ນໄວ້ແຕ່ຜູ້ທີ່ກ່າວໂດຍພຣະວິນຍານບໍລິສຸດ.

4ຂອງພຣະລາຊະທານນັ້ນມີຕ່າງໆ ກັນ ແຕ່ມີພຣະວິນຍານອົງດຽວກັນ. 5ງານຮັບໃຊ້ມີ
ຕ່າງໆ ກັນ ແຕ່ມີພຣະຜູ້ເປັນເຈົ້າອົງດຽວກັນ. 6ການດຳເນີນງານມີຕ່າງໆ ກັນ ແຕ່ມີພຣະເຈົ້າ
ອົງດຽວກັນເປັນຕົ້ນເຫດແຫ່ງການດຳເນີນງານຕ່າງໆ ນັ້ນໃນທຸກຄົນ. 7ການສະແດງຂອງ
ພຣະວິນຍານນັ້ນມີແກ່ທຸກຄົນເພື່ອປະໂຫຍດຮ່ວມກັນ. 8ພຣະເຈົ້າຊົງໂຜດປະທານໂດຍທາງ
ພຣະວິນຍານ ໃຫ້ຜູ້ໜຶ່ງມີຖ້ອຍຄຳປະກອບດ້ວຍສະຕິປັນຍາ ແລະໃຫ້ອີກຜູ້ໜຶ່ງມີຖ້ອຍຄຳອັນ
ປະກອບດ້ວຍວິຊາຄວາມຮູ້ ແຕ່ເປັນພຣະວິນຍານອົງດຽວກັນ. 9ແລະໃຫ້ອີກຜູ້ໜຶ່ງມີຄວາມເຊື່ອ
ແຕ່ເປັນພຣະວິນຍານອົງດຽວກັນ ແລະໃຫ້ອີກຜູ້ໜຶ່ງມີອຳນາດໃຫ້ຄົນດີພະຍາດ ແຕ່ເປັນພຣະ-
ວິນຍານອົງດຽວກັນ. 10ແລະໃຫ້ອີກຜູ້ໜຶ່ງມີອຳນາດເຮັດການອິດທິລິດຕ່າງໆ ແລະໃຫ້ອີກຜູ້ໜຶ່ງ
ປະກາດພຣະທຳ, ແລະໃຫ້ອີກຜູ້ໜຶ່ງຮູ້ຈັກສັງເກດວິນຍານຕ່າງໆ ແລະໃຫ້ອີກຜູ້ໜຶ່ງປາກພາສາ
ແປກໆ ແລະໃຫ້ອີກຜູ້ໜຶ່ງແປພາສາແປກໆ. 11ສິ່ງສາລະພັດເຫລົ່ານີ້ພຣະວິນຍານອົງດຽວກັນ
ຊົງບັນດານ ແລະປະທານແກ່ທຸກຄົນຕາມຊອບພຣະໄທຂອງພຣະອົງ.

## ອະໄວຍະວະທຸກສ່ວນກໍຮ່ວມເປັນຮ່າງກາຍອັນດຽວ

12ເຖິງວ່າຮ່າງກາຍເປັນອັນດຽວ ກໍຍັງມີອະໄວຍະວະຫລາຍສ່ວນ ແລະອະໄວຍະວະເຫລົ່າ-
ນັ້ນ ແມ່ນຈະມີຫລາຍສ່ວນ ກໍຍັງເປັນກາຍດຽວກັນສັນໃດ ພຣະຄຣິດກໍຊົງເປັນສັນນັ້ນ.
13ເພາະວ່າເຖິງແມ່ນພວກເຮົາຈະເປັນຊາດຢິວ, ຫລືຄົນຕ່າງຊາດກໍດີ, ເປັນຂ້ອຍຂ້າ ຫລືເປັນ
ອິດສະຫລະກໍດີ, ເຮົາທັງຫລາຍໄດ້ຮັບບັບຕິສະມາໂດຍພຣະວິນຍານອົງດຽວ ຈຶ່ງເຂົ້າເປັນກາຍ

ອັນດຽວກັນ ແລະພຣະວິນຍານອົງດຽວກໍຊຶມຊາບຢູ່.[ກ] 14ເພາະວ່າຮ່າງກາຍນັ້ນບໍ່ໄດ້ປະ-
ກອບດ້ວຍອະໄວຍະວະອັນດຽວ ແຕ່ໄດ້ປະກອບດ້ວຍອະໄວຍະວະຫລາຍອັນ. 15ຖ້າຕີນຈະກ່າວ
ວ່າ, "ເພາະຂ້ອຍບໍ່ໄດ້ເປັນມື ຂ້ອຍຈຶ່ງບໍ່ໄດ້ເປັນສ່ວນໃດໃນອະໄວຍະວະຂອງຮ່າງກາຍນັ້ນ"
ແລ້ວຕີນຈະບໍ່ເປັນສ່ວນໃດໃນອະໄວຍະວະຂອງຮ່າງກາຍ ເພາະເຫດເວົ້າຢ່າງນັ້ນກໍບໍ່ໄດ້. 16ຖ້າ
ຫູຈະກ່າວວ່າ, "ເພາະຂ້ອຍບໍ່ໄດ້ເປັນຕາ ຂ້ອຍຈຶ່ງບໍ່ໄດ້ເປັນສ່ວນໃດໃນອະໄວຍະວະຂອງຮ່າງ-
ກາຍນັ້ນ" ຫູຈະບໍ່ໄດ້ເປັນສ່ວນໃດໃນອະໄວຍະວະຂອງຮ່າງກາຍ ເພາະເຫດເວົ້າຢ່າງນັ້ນກໍບໍ່ໄດ້.
17ຖ້າອະໄວຍະວະທັງໝົດໃນຮ່າງກາຍເປັນຕາ ການໄດ້ຍິນຈະຢູ່ໃສ ຖ້າຮ່າງກາຍທັງໝົດເປັນຫູ
ການດົມກິ່ນຈະຢູ່ໃສ. 18ແຕ່ພຣະເຈົ້າໄດ້ຊົງຕັ້ງອະໄວຍະວະທຸກສ່ວນໄວ້ໃນຮ່າງກາຍຕາມຊອບ
ພຣະໄທຂອງພຣະອົງ. 19ຖ້າອະໄວຍະວະທຸກສ່ວນໃນຮ່າງກາຍເປັນອັນດຽວກັນ ຮ່າງກາຍຈະມີ
ຢູ່ໃສ. 20ທີ່ຈິ່ງມີອະໄວຍະວະຫລາຍອັນແຕ່ຍັງເປັນຮ່າງກາຍອັນດຽວກັນ. 21ຕາຈະເວົ້າແກ່ມືວ່າ,
"ຂ້ອຍບໍ່ຕ້ອງການເຈົ້າ" ກໍບໍ່ໄດ້ ຫລືຫົວຈະເວົ້າແກ່ຕີນວ່າ, "ຂ້ອຍບໍ່ຕ້ອງການເຈົ້າ" ກໍບໍ່ໄດ້ ຫລື
ຫົວຈະເວົ້າແກ່ຕີນວ່າ, "ຂ້ອຍບໍ່ຕ້ອງການເຈົ້າ" ກໍບໍ່ໄດ້. 22ທີ່ຈິງອະໄວຍະວະສ່ວນທີ່ເຮົາເຫັນວ່າ
ອ່ອນແອ ເຮົາກໍຂາດເສຍບໍ່ໄດ້. 23ແລະອະໄວຍະວະສ່ວນທີ່ເຮົາຖືວ່າມີກຽດນ້ອຍ ເຮົາກໍເຮັດໃຫ້
ມີກຽດຫລາຍຂຶ້ນ ແລະອະໄວຍະວະສ່ວນທີ່ບໍ່ໜ້າເບິ່ງນັ້ນ ເຮົາກໍເຮັດໃຫ້ເປັນໜ້າເບິ່ງຫລາຍຂຶ້ນ.
24ແຕ່ອະໄວຍະວະທີ່ໜ້າຊົມຢູ່ແລ້ວ ກໍບໍ່ຈຳເປັນຕ້ອງຕົກແຕ່ງອີກ ແຕ່ພຣະເຈົ້າໄດ້ຊົງບັນດານ
ໃຫ້ອະໄວຍະວະທຸກສ່ວນເຂົ້າເປັນອັນດຽວກັນ, ຊົງໃຫ້ອະໄວຍະວະທີ່ຕ່ຳຕ້ອຍໄດ້ຮັບຄວາມນັບ-
ຖືຫລາຍຂຶ້ນ. 25ເພື່ອບໍ່ໃຫ້ມີການຍາດແຍ່ງກັນໃນຮ່າງກາຍ ແຕ່ໃຫ້ອະໄວຍະວະທຸກສ່ວນຄຳນຶງ
ເຖິງກັນແລະກັນ. 26ຖ້າອະໄວຍະວະອັນໜຶ່ງເຈັບ ອະໄວຍະວະທັງໝົດກໍເຈັບດ້ວຍກັນ ຖ້າອະ
ໄວຍະວະອັນໜຶ່ງໄດ້ຮັບກຽດ ອະໄວຍະວະທັງໝົດກໍຊົມຊື່ນຍິນດີດ້ວຍກັນ.

27ຝ່າຍເຈົ້າທັງຫລາຍເປັນພຣະກາຍຂອງພຣະຄຣິດ ແລະທຸກຄົນເປັນອະໄວຍະວະສ່ວນໜຶ່ງ
ຂອງພຣະກາຍນັ້ນ. 28ແລະພຣະເຈົ້າໄດ້ຊົງຕັ້ງບາງຄົນໄວ້ໃນຄຣິສຕະຈັກ ຄື ໜຶ່ງ, ອັກຄະສາ-
ວົກ ສອງ, ຜູ້ປະກາດພຣະທຳ ສາມ, ຄູບາອາຈານ ແລ້ວຕໍ່ຈາກນັ້ນກໍມີຜູ້ເຮັດການອິດທິລິດ
ຕ່າງໆ ຜູ້ມີອຳນາດໃຫ້ພະຍາດດີ, ຜູ້ອຸປະຖຳ. ຜູ້ປົກຄອງ, ແລະຜູ້ປາກພາສາແປກໆ. 29ທຸກ
ຄົນເປັນອັກຄະສາວົກຫລື ທຸກຄົນປະກາດພຣະທຳຫລື ທຸກຄົນເປັນຄູບາອາຈານຫລື ທຸກຄົນ
ເຮັດການອິດທິລິດໄດ້ຫລື. 30ທຸກຄົນໄດ້ຮັບອຳນາດໃຫ້ດີພະຍາດຫລື ທຸກຄົນປາກພາສາແປກໆ
ໄດ້ຫລື ທຸກຄົນແປພາສາແປກໆ ໄດ້ຫລື.

31ແຕ່ເຈົ້າທັງຫລາຍຈົ່ງຮ້ອນໃຈສະແຫວງຫາຂອງພຣະລາຊະທານອັນສຳຄັນກວ່ານັ້ນ ແລະ
ເຮົາຈະສະແດງທາງອັນດີຫລາຍກວ່ານັ້ນອີກແກ່ພວກເຈົ້າ.

# ບົດທີ 13

## ເລື່ອງຄວາມຮັກ

1ເຖິງແມ່ນເຮົາເວົ້າພາສາແປກໆ ໄດ້ ຈະເປັນພາສາມະນຸດຫລືພາສາເທວະດາກໍດີ ແຕ່ບໍ່ມີ

[ກ]ຫລືວ່າ "ແລະແນມພຣະວິນຍານອົງດຽວນັ້ນໄດ້ຊົງຖອກໃຫ້ເຮົາທັງຫລາຍດື່ມ."

ຄວາມຮັກ ເຮົາກໍເປັນເໝືອນຄ້ອງທລືແຊ່ງທີ່ສົ່ງສຽງດັງອຶກກະທຶກ. 2ເຖິງແມ່ນເຮົາປະກາດ
ພຣະທຳໄດ້, ແລະເຂົ້າໃຈໃນຂໍ້ລັບເລິກທັງປວງແລະມີຄວາມຮູ້ທັງສິ້ນ ແລະມີຄວາມເຊື່ອຢ່າງ
ຄົບຖ້ວນພໍຈະບອກໃຫ້ພູເຄື່ອນທີ່ໄປໄດ້ ແຕ່ບໍ່ມີຄວາມຮັກ ເຮົາກໍບໍ່ມີຄ່າອັນໃດ. 3ເຖິງແມ່ນເຮົາ
ຈະບໍລິຈາກສິ່ງຂອງຈົນໝົດ ຫລືສະຫລະຕົວເຮົາໃຫ້ເຂົາເຜົາໄຟ ແຕ່ບໍ່ມີຄວາມຮັກ ເຮົາກໍບໍ່ໄດ້
ປະໂຫຍດຫຍັງໝົດ.

4ຄວາມຮັກກໍອົດທົນດົນນານ ແລະຊອບໃນການເມດຕາກະລຸນາ ຄວາມຮັກບໍ່ເຫິງສາ, ບໍ່
ອວດອ້າງ, ບໍ່ຈອງຫອງ, 5ບໍ່ເຮັດການອັນບໍ່ສຸພາບ, ບໍ່ຄິດເຫັນແກ່ປະໂຫຍດສ່ວນຕົວຝ່າຍດຽວ,
ບໍ່ມີໃຈຮ້າຍງາຍ, ບໍ່ຊອບຈົດຈຳຄວາມຜິດ. 6ບໍ່ຍິນດີໃນການອະທຳແຕ່ຍິນດີໃນການສັດຈິງ.
7ຄວາມຮັກສູ້ທົນທຸກສິ່ງ, ເຊື່ອທຸກສິ່ງ, ໄວ້ວາງໃຈທຸກສິ່ງ, ແລະພຽນເອົາທຸກສິ່ງ.

8ເຖິງແມ່ນການປະກາດພຣະທຳກໍຈະຖືກຍົກເລີກ, ຫລືການເວົ້າພາສາແປກໆ ກໍຈະເຊົາ
ແລະວິຊາຄວາມຮູ້ກໍຈະຖືກຍົກເລີກເສຍ ແຕ່ຄວາມຮັກຕັ້ງຢູ່ບໍ່ຂາດຈັກເທື່ອ. 9ເພາະຄວາມຮູ້ຂອງ
ພວກເຮົານັ້ນກໍບໍ່ສົມບູນ ແລະການປະກາດພຣະທຳກໍບໍ່ສົມບູນ. 10ແຕ່ເມື່ອຄວາມສົມບູນມາເຖິງ
ແລ້ວ ຄວາມບົກພ່ອງນັ້ນກໍຈະຖືກຍົກເລີກເສຍ. 11ເວລາເຮົາຍັງເປັນເດັກນ້ອຍຢູ່ນັ້ນ ເຮົາເຄີຍ
ປາກແລະມີໃຈຢ່າງເດັກນ້ອຍ, ເຄີຍຄິດຫາເຫດຜົນຢ່າງເດັກນ້ອຍ ແຕ່ເມື່ອເຮົາກາຍເປັນຄົນແກ່
ແລ້ວ ເຮົາກໍໄດ້ເລີກອາການເດັກນ້ອຍນັ້ນເສຍ. 12ເພາະວ່າດຽວນີ້ເຮົາທັງຫລາຍເຫັນພໍມົວໆ
ເໝືອນເບິ່ງໃນແວ່ນ ແຕ່ວ່າເວລານັ້ນຈະໄດ້ເຫັນພຣະພັກຢ່າງຄັກ ດຽວນີ້ຄວາມຮູ້ຂອງເຮົາບໍ່ສົມ-
ບູນ ແຕ່ວ່າເວລານັ້ນເຮົາຈະຮູ້ຢ່າງສົມບູນເໝືອນພຣະເຈົ້າຊົງຮູ້ຈັກເຮົາແລ້ວ. 13ບັດນີ້ຍັງຕັ້ງຢູ່
ສາມສິ່ງ ຄືຄວາມເຊື່ອ, ຄວາມຫວັງໃຈ, ແລະຄວາມຮັກ ແຕ່ສິ່ງໃຫຍ່ກວ່າໝູ່ແມ່ນຄວາມຮັກ.

# ບົດທີ 14

## ເລື່ອງພຣະລາຊະທານຊຶ່ງມາຈາກພຣະວິນຍານ (ຕໍ່)

1ຈົ່ງຕັ້ງຈຸດມຸ້ງໝາຍຫາຄວາມຮັກ ຈົ່ງຮ້ອນໃຈສະແຫວງຫາຂອງພຣະລາຊະທານຊຶ່ງມາຈາກ
ພຣະວິນຍານ ເປັນຕົ້ນວ່າການປະກາດພຣະທຳ. 2ເພາະວ່າຜູ້ປາກພາສາແປກໆ ນັ້ນບໍ່ໄດ້ເວົ້າ
ຕໍ່ພວກມະນຸດ ແຕ່ທູນຕໍ່ພຣະເຈົ້າ ເພາະບໍ່ມີໃຜເຂົ້າໃຈໄດ້ ແຕ່ຜູ້ນັ້ນກຳລັງກ່າວຂໍ້ລັບເລິກໂດຍ
ພຣະວິນຍານ. 3ຝ່າຍຜູ້ທີ່ປະກາດພຣະທຳນັ້ນກໍກ່າວແກ່ຄົນທັງຫລາຍເພື່ອໃຫ້ເຂົາຈະເລີນຂຶ້ນ
ເປັນຄວາມເຕືອນສະຕິແລະເລົ້າໂລມ. 4ຝ່າຍຜູ້ທີ່ປາກພາສາແປກໆ ນັ້ນກໍເຮັດໃຫ້ຕົນເອງຈະ-
ເລີນຂຶ້ນຝ່າຍດຽວ ແຕ່ຝ່າຍຜູ້ທີ່ປະກາດພຣະທຳນັ້ນກໍເຮັດໃຫ້ຄຣິສຕະຈັກຈະເລີນຂຶ້ນ. 5ເຮົາຢາກ
ໃຫ້ເຈົ້າທັງຫລາຍປາກພາສາແປກໆ ໄດ້ ແຕ່ຫລາຍກວ່ານັ້ນອີກເຮົາຢາກໃຫ້ພວກເຈົ້າປະກາດ
ພຣະທຳໄດ້ ເພາະວ່າຜູ້ທີ່ປະກາດພຣະທຳນັ້ນກໍໃຫຍ່ກວ່າຜູ້ທີ່ປາກພາສາແປກໆ ໄດ້ ເວັ້ນໄວ້
ແຕ່ຜູ້ນັ້ນແປພາສານັ້ນອອກ ເພື່ອຄຣິສຕະຈັກຈະໄດ້ຮັບຄວາມຈະເລີນຂຶ້ນ.

6ແຕ່ບັດນີ້ ພີ່ນ້ອງທັງຫລາຍເອີຍ, ຖ້າເຮົາຈະມາຫາເຈົ້າທັງຫລາຍແລະປາກພາສາແປກໆ
ພວກເຈົ້າຈະໄດ້ປະໂຫຍດອັນໃດຈາກເຮົາ ເວັ້ນເສຍແຕ່ເຮົາຈະກ່າວຄວາມທີ່ຊົງສະແດງຈາກ
ພຣະເຈົ້າ, ຈະສະແດງວິຊາຄວາມຮູ້, ຈະປະກາດພຣະທຳ, ຫລືຈະນຳຄວາມສັ່ງສອນໃຫ້ແກ່ເຈົ້າ

ທັງຫລາຍ. 7ດັ່ງນັ້ນເຄື່ອງດົນຕີທີ່ບໍ່ມີຊີວິດ ຄືປີ່ຫລືພິນກໍດີ ຖ້າມັນບໍ່ອອກສຽງຄັກ ໃຜຈະຮູ້ໄດ້
ຢ່າງໃດວ່າເຂົາເປົ່າຫລືດີດຈັງຫວະໃດ. 8ຖ້າດຽ່ວແກອອກສຽງບໍ່ຄັກ ໃຜຈະຕຽມຕົວເຂົ້າສູ່ຂ້າ-
ເສິກ. 9ຝ່າຍເຈົ້າທັງຫລາຍກໍເປັນຢ່າງນັ້ນ ຖ້າພວກເຈົ້າປາກພາສາແປກໆ ແຕ່ເວົ້າຄວາມທີ່
ເຂົ້າໃຈບໍ່ໄດ້ ຜູ້ທີ່ຟັງຈະເຂົ້າໃຈຄວາມເວົ້າຂອງເຈົ້ານັ້ນໄດ້ຢ່າງໃດ ເພາະເຈົ້າກໍຈະເວົ້າລອຍໄປ
ຕາມລົມ. 10ໃນໂລກນີ້ມີຫລາຍພາສາ ແຕ່ບໍ່ມີພາສາໃດທີ່ຂາດຄວາມໝາຍ. 11ແຕ່ຖ້າເຮົາບໍ່ເຂົ້າ-
ໃຈຄວາມໝາຍຂອງພາສານັ້ນ ເຮົາກໍຈະເປັນຄົນຕ່າງຊາດຕໍ່ຜູ້ທີ່ປາກພາສານັ້ນ ແລະຜູ້ທີ່ປາກ
ພາສານັ້ນກໍຈະເປັນຄົນຕ່າງຊາດຕໍ່ເຮົາເໝືອນກັນ. 12ເຫດສັນນັ້ນ, ເມື່ອເຈົ້າທັງຫລາຍກຳລັງ
ຮ້ອນໃຈສະແຫວງຫາຂອງພຣະລາຊະທານຊຶ່ງມາຈາກພຣະວິນຍານ ກໍຈົ່ງສະແຫວງຫາໃຫ້
ຫລາຍກວ່າເພື່ອຈະໃຫ້ຄຣິສຕະຈັກຈະເລີນຂຶ້ນ.

13ເພາະສັນນັ້ນຜູ້ທີ່ປາກພາສາແປກໆ ໄດ້ນັ້ນຄວນອ້ອນວອນຂໍໃຫ້ຕົນສາມາດແປໄດ້ດ້ວຍ.
14ເພາະຖ້າເຮົາໄຫວ້ວອນເປັນພາສາແປກໆ ຈິດວິນຍານຂອງເຮົາໄຫວ້ວອນຢູ່ກໍຈິງ ແຕ່ຄວາມ
ຄຶດຂອງເຮົາກໍບໍ່ເຂົ້າຮ່ວມ. 15ຖ້າດັ່ງນັ້ນແລ້ວ, ເຮົາຈະເຮັດຢ່າງໃດ ເຮົາຈະໄຫວ້ວອນດ້ວຍຈິດ
ວິນຍານກໍຈິງ ແຕ່ຈະໄຫວ້ວອນດ້ວຍຄວາມຄຶດເໝືອນກັນ ເຮົາຈະຮ້ອງເພງດ້ວຍຈິດວິນຍານກໍ
ຈິງ ແຕ່ຈະຮ້ອງເພງດ້ວຍຄວາມຄຶດເໝືອນກັນ. 16ຖ້າບໍ່ດັ່ງນັ້ນ, ຄັນພວກເຈົ້າກ່າວໂມທະນາ
ພຣະຄຸນດ້ວຍຈິດວິນຍານ ຄົນທຳມະດາທີ່ບໍ່ຮູ້ພາສານັ້ນຈະກ່າວຕອບຄວາມໂມທະນາພຣະຄຸນ
ຂອງພຣະເຈົ້າວ່າ "ອາແມນ" ໄດ້ຢ່າງໃດ ເພາະຄຳທີ່ເຈົ້າກ່າວນັ້ນກໍບໍ່ເຂົ້າໃຈ. 17ເຖິງແມ່ນເຈົ້າ
ໂມທະນາພຣະຄຸນຢ່າງດີກໍຕາມ ແຕ່ຄົນອື່ນນັ້ນຈະບໍ່ໄດ້ຮັບຄວາມຈະເລີນ. 18ເຮົາໂມທະນາ
ພຣະຄຸນພຣະເຈົ້າວ່າເຮົາປາກພາສາແປກໆ ໄດ້ຫລາຍກວ່າພວກເຈົ້າ. 19ແຕ່ໃນຄຣິສຕະຈັກ
ເຮົາພໍໃຈທີ່ຈະເວົ້າຫ້າຄຳດ້ວຍຈິດໃຈຂອງເຮົາ ເພື່ອເປັນຄະຕິສອນຄົນອື່ນ ດີກວ່າທີ່ຈະເວົ້າໝື່ນ
ຄຳເປັນພາສາແປກໆ.

20ພີ່ນ້ອງທັງຫລາຍເອີຍ, ຢ່າໃຫ້ຄວາມນຶກຄຶດຂອງເຈົ້າເປັນຢ່າງເດັກນ້ອຍ ຝ່າຍຄວາມຊົ່ວ
ເປັນເໝືອນເດັກນ້ອຍອ່ອນ ແຕ່ຝ່າຍຄວາມນຶກຄຶດຈົ່ງເປັນຢ່າງຜູ້ແກ່. 21ໃນພຣະບັນຍັດມີຄຳ
ຂຽນໄວ້ແລ້ວວ່າ, "ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ'ເຮົາຈະເວົ້າກັບພົນລະເມືອງນີ້ດ້ວຍຄົນຕ່າງ
ພາສາດ້ວຍຮີມສົບຂອງຄົນຕ່າງດ້າວເຖິງປານນັ້ນເຂົາກໍຈະບໍ່ຟັງເຮົາ'." 22ເຫດສັນນັ້ນການເວົ້າ
ພາສາແປກໆ ຈຶ່ງບໍ່ເປັນເຄື່ອງໝາຍສຳຄັນແກ່ຄົນທີ່ເຊື່ອ ແຕ່ເປັນໝາຍສຳຄັນສຳລັບຄົນທີ່ບໍ່
ເຊື່ອ ສ່ວນການປະກາດພຣະທຳບໍ່ເປັນສຳລັບຄົນທີ່ບໍ່ເຊື່ອແຕ່ເປັນສຳລັບຄົນທີ່ເຊື່ອແລ້ວ. 23ເຫດ
ສັນນັ້ນຖ້າຄຣິສຕະຈັກມາຮ່ວມປະຊຸມກັນ ແລະຄົນທັງປວງຕ່າງຄົນກໍຕ່າງເວົ້າພາສາແປກໆ
ແລະມີຄົນທຳມະດາທີ່ບໍ່ຮູ້ພາສານັ້ນຫລືຄົນທີ່ບໍ່ເຊື່ອເຂົ້າມາ ເຂົາຈະບໍ່ເວົ້າວ່າເຈົ້າທັງຫລາຍເປັນ
ບ້າຫລື. 24ແຕ່ຖ້າທຸກຄົນປະກາດພຣະທຳ ແລ້ວມີຄົນທີ່ບໍ່ເຊື່ອຫລືຄົນທຳມະດາເຂົ້າມາ ທຸກຄົນ
ຈະເປັນເຫດໃຫ້ເຂົາຮູ້ເມື່ອຕົວ ແລະເປັນເຫດໃຫ້ເຂົາເກີດຄວາມສັງຄວາມເກາດໃນຈິດໃຈຂອງ
ເຂົາ. 25ຄວາມລັບທີ່ເຊື່ອງໄວ້ໃນໃຈຂອງເຂົາຈະປະກົດແຈ້ງ ເຂົາກໍຈະໝູບໜ້າລົງນະມັດສະ-
ການຂາບໄຫວ້ພຣະເຈົ້າ ໂດຍຮັບວ່າ, "ພຣະເຈົ້າຊົງສະຖິດຢູ່ຖ້າມກາງພວກທ່ານເປັນແທ້."

## ເຮັດສິ່ງສາລະພັດໃຫ້ຖືກຕາມລະບຽບ

26ພີ່ນ້ອງທັງຫລາຍເອີຍ, ຈະເປັນຢ່າງໃດ ເມື່ອພວກເຈົ້າມາປະຊຸມກັນ ບາງຄົນກໍມີບົດເພງ
ສັນລະເສີນ, ບາງຄົນມີບົດຄຳສອນ, ບາງຄົນກໍມີບົດຄວາມທີ່ຊົງສະແດງມາຈາກພຣະເຈົ້າ,
ບາງຄົນກໍປາກພາສາແປກໆ, ບາງຄົນກໍແປພາສາແປກໆ ເຈົ້າຈົ່ງເຮັດທຸກຢ່າງເພື່ອໃຫ້ມີການ
ຈະເລີນຂຶ້ນ. 27ຖ້າຜູ້ໃດຈະປາກພາສາແປກໆ ຈົ່ງໃຫ້ປາກພຽງສອງຄົນຫລືຢ່າງຫລາຍສາມຄົນ
ແລະໃຫ້ປາກເທື່ອລະຄົນ ແລ້ວໃຫ້ມີຜູ້ແປຜູ້ໜຶ່ງ. 28ແຕ່ຖ້າບໍ່ມີຜູ້ໃດແປໄດ້ ກໍໃຫ້ຄົນເຫລົ່ານັ້ນມິດ
ຢູ່ໃນທີ່ປະຊຸມ ໃຫ້ເຂົາເວົ້າກັບຕົນເອງແລະທູນຕໍ່ພຣະເຈົ້າ. 29ຝ່າຍພວກຜູ້ປະກາດພຣະທຳນັ້ນ
ໃຫ້ກ່າວແຕ່ສອງຫລືສາມຄົນ ແລະໃຫ້ພວກຄົນອື່ນຮັບພິຈາລະນາເອົາຂໍ້ຄວາມທີ່ເຂົາກ່າວນັ້ນ.
30ແລະຖ້າມີສິ່ງໃດຊົງສະແດງແກ່ຄົນອື່ນທີ່ນັ່ງຢູ່ດ້ວຍກັນນັ້ນ ກໍໃຫ້ຜູ້ກ່າວກ່ອນນັ້ນມິດຢູ່.
31ເພາະວ່າພວກເຈົ້າປະກາດພຣະທຳໄດ້ທຸກຄົນ ແຕ່ໃຫ້ປະກາດເປັນລຳດັບກັນເທື່ອລະຄົນ ເພື່ອ
ຄົນທັງປວງຈະໄດ້ຄວາມຮູ້ແລະຈະໄດ້ຮັບຄວາມໜູນໃຈ. 32ວິນຍານຂອງຜູ້ປະກາດພຣະທຳນັ້ນ
ຍອມຢູ່ໃຕ້ບັງຄັບຂອງຕົນ. 33ເພາະວ່າພຣະເຈົ້າບໍ່ໃຊ່ເປັນຜູ້ກໍ່ເຫດວຸ້ນວາຍ ແຕ່ຊົງໃຫ້ເກີດ
ຄວາມສະຫງົບ.

34ຕາມລະບຽບທີ່ປະຕິບັດໃນບັນດາຄຣິສຕະຈັກແຫ່ງໄພ່ພົນຂອງພຣະເຈົ້ານັ້ນ, ຈົ່ງໃຫ້ພວກ
ຜູ້ຍິງມິດຢູ່ໃນທີ່ປະຊຸມ ເພາະເຂົາບໍ່ໄດ້ຮັບອະນຸຍາດໃຫ້ປາກ ແຕ່ໃຫ້ເຂົາຍອມຢູ່ໃຕ້ບັງຄັບບັນຊາ
ຕາມດັ່ງພຣະບັນຍັດໄດ້ສັ່ງໄວ້ນັ້ນ. 35ຖ້າເຂົາຢາກຮຽນຮູ້ອັນໃດ ຈົ່ງໃຫ້ຖາມຜົວເຂົາເອງຢູ່ເຮືອນ
ເພາະວ່າການທີ່ຜູ້ຍິງຈະກ່າວໃນທີ່ປະຊຸມກໍເປັນການໜ້າອາຍ. 36ພຣະທຳຂອງພຣະເຈົ້າໄດ້
ອອກມາຈາກພວກເຈົ້າຫລື ໄດ້ຊົງປະທານມາເຖິງພວກເຈົ້າແຕ່ພວກດຽວຫລື.

37ຖ້າຜູ້ໃດຖືວ່າຕົນເປັນຜູ້ປະກາດພຣະທຳ ຫລືເປັນຜູ້ຮັບຂອງພຣະລາຊະທານຈາກພຣະວິນ-
ຍານ ຜູ້ນັ້ນກໍຄວນຍອມຮັບຮູ້ວ່າຂໍ້ຄວາມທີ່ເຮົາຂຽນມາເຖິງເຈົ້າທັງຫລາຍນັ້ນ ເປັນພຣະບັນຍັດ
ຂອງອົງພຣະຜູ້ເປັນເຈົ້າ. 38ແລະຖ້າຜູ້ໃດບໍ່ຍອມຮັບຮູ້ຂໍ້ຄວາມນີ້ ກໍບໍ່ຕ້ອງຮັບຮູ້ຜູ້ນັ້ນເໝືອນກັນ.
39ດັ່ງນີ້ແຫລະ ພີ່ນ້ອງທັງຫລາຍເອີຍ, ຈົ່ງຮ້ອນໃຈສະແຫວງຫາທີ່ຈະປະກາດພຣະທຳ ສ່ວນ
ການປາກພາສາແປກໆ ນັ້ນກໍຢ່າຊູ່ຫ້າມ. 40ແຕ່ຈົ່ງປະຕິບັດທຸກສິ່ງໃຫ້ຖືກຕາມລະບຽບວິໃນ.

# ບົດທີ 15

## ການທີ່ພຣະເຈົ້າຊົງຄືນພຣະຊົນ

1ພີ່ນ້ອງທັງຫລາຍເອີຍ, ເຮົາຂໍແຈ້ງໃຫ້ເຈົ້າທັງຫລາຍຄຳນຶງເຖິງຂ່າວປະເສີດທີ່ເຮົາໄດ້ປະ-
ກາດແກ່ພວກເຈົ້າແລ້ວ ຊຶ່ງພວກເຈົ້າໄດ້ຍອມຮັບເອົາໄວ້ແລະຕັ້ງຢູ່ໃນຂ່າວປະເສີດນັ້ນ. 2ແລະ
ຊຶ່ງເປັນເຫດທີ່ກຳລັງໃຫ້ເຈົ້າທັງຫລາຍໄດ້ພົ້ນ ຖ້າພວກເຈົ້າຍັງຍຶດຖືຂໍ້ຄວາມທີ່ເຮົາໄດ້ປະກາດ
ເປັນຂ່າວປະເສີດແກ່ພວກເຈົ້ານັ້ນ ເວັ້ນເສຍແຕ່ພວກເຈົ້າຫາກເຊື່ອຢ່າງບໍ່ຈິງໃຈ. 3ເລື່ອງທີ່ເຮົາ
ໄດ້ຮັບໄວ້ແລ້ວນັ້ນ ເຮົາໄດ້ມອບໄວ້ແກ່ເຈົ້າທັງຫລາຍເປັນເລື່ອງສຳຄັນທີ່ສຸດຄືວ່າ ພຣະຄຣິດຊົງ
ວາຍພຣະຊົນແທນຄວາມຜິດບາບຂອງເຮົາທັງຫລາຍຕາມທີ່ຂຽນໄວ້ໃນພຣະຄຳພີ. 4ແລະຊົງຖືກ
ວາງໄວ້ ແລ້ວວັນຖ້ວນສາມໄດ້ຖືກຊົງບັນດານໃຫ້ຄືນຂຶ້ນມາ ຕາມທີ່ຂຽນໄວ້ໃນພຣະຄຳພີນັ້ນ.

5ພຣະອົງຊົງປະກົດ ແກ່ເກຟາ ແລ້ວແກ່ພວກສິບສອງຄົນນັ້ນ. 6ຕໍ່ມາພຣະອົງໄດ້ຊົງປະກົດແກ່
ພວກພີ່ນ້ອງກວ່າຫ້າຮ້ອຍຄົນໃນຄາວດຽວ ຊຶ່ງສ່ວນຫລາຍຍັງເປັນຢູ່ຈົນເຖິງທຸກວັນນີ້ ແຕ່ບາງ
ຄົນກໍລ່ວງລັບໄປແລ້ວ. 7ຕໍ່ນັ້ນອີກພຣະອົງໄດ້ຊົງປະກົດແກ່ຢາໂກໂບ ແລ້ວແກ່ອັກຄະສາວົກ
ທັງໝົດ. 8ພາຍຫລັງທີ່ສຸດພຣະອົງໄດ້ຊົງປະກົດແກ່ເຮົາ ຜູ້ເປັນເໝືອນລູກທີ່ເກີດຜິດຍາມ.
9ເພາະວ່າເຮົາເປັນຜູ້ນ້ອຍທີ່ສຸດໃນພວກອັກຄະສາວົກແລະບໍ່ສົມຄວນຈະໄດ້ຊື່ວ່າອັກຄະສາວົກ
ເພາະເຮົາໄດ້ກົດຂີ່ຂົ່ມເຫງຄຣິສຕະຈັກຂອງພຣະເຈົ້າ. 10ແຕ່ວ່າທີ່ເຮົາເປັນຢູ່ຢ່າງນີ້ກໍເນື່ອງດ້ວຍ
ພຣະຄຸນຂອງພຣະເຈົ້າ ແລະພຣະຄຸນຂອງພຣະອົງທີ່ໄດ້ຊົງປະທານແກ່ເຮົານັ້ນກໍບໍ່ໄດ້ໄຮ້ປະ-
ໂຫຍດ ແຕ່ແທນທີ່ຈະເປັນດັ່ງນັ້ນ ເຮົາໄດ້ເຮັດການໜັກໜ່ວງລື່ນກວ່າເຂົາທັງໝົດອີກ ບໍ່ໃຊ່ເຮົາ
ເອງທີ່ເຮັດ ແຕ່ແມ່ນພຣະຄຸນຂອງພຣະເຈົ້າຊຶ່ງສະຖິດຢູ່ໃນນຳເຮົາທີ່ເຮັດ. 11ເຫດສັນນັ້ນເຖິງ
ແມ່ນວ່າເຮົາຫລືເຂົາກໍດີ ເຮົາທັງຫລາຍກໍໄດ້ປະກາດຢ່າງທີ່ກ່າວມານັ້ນແລະເຈົ້າທັງຫລາຍກໍໄດ້
ເຊື່ອຢ່າງນັ້ນ.

## ການທີ່ຄົນຕາຍເປັນຄືນມາ

12ປະການໜຶ່ງ, ຖ້າເຮົາປະກາດວ່າພຣະເຈົ້າໄດ້ຊົງບັນດານໃຫ້ພຣະຄຣິດຄືນຂຶ້ນມາແລ້ວ
ເປັນແນວໃດບາງຄົນໃນພວກເຈົ້າຈິ່ງກ່າວວ່າບໍ່ມີການເປັນຄືນມາຈາກຕາຍ. 13ຖ້າບໍ່ມີການເປັນ
ຄືນມາຈາກຕາຍ ພຣະຄຣິດກໍບໍ່ໄດ້ຊົງບັນດານໃຫ້ຄືນຂຶ້ນມາ 14ຖ້າພຣະຄຣິດບໍ່ໄດ້ຊົງຄືນພຣະ-
ຊົນແລ້ວ ການປະກາດຂອງເຮົາກໍບໍ່ມີປະໂຫຍດ ແລະຄວາມເຊື່ອຂອງພວກເຈົ້າກໍບໍ່ມີປະໂຫຍດ
ເໝືອນກັນ. 15ແລ້ວກໍຈະປະກົດວ່າພວກເຮົາເປັນພະຍານບໍ່ຈິງໃນເລື່ອງພຣະເຈົ້າ ເພາະພວກ
ເຮົາໄດ້ກ່າວພະຍານອ້າງວ່າພຣະເຈົ້າໄດ້ຊົງບັນດານໃຫ້ພຣະຄຣິດເປັນຄືນມາແລ້ວ ແຕ່ຖ້າຄົນ
ຕາຍບໍ່ຖືກຊົງບັນດານໃຫ້ຄືນມາ ພຣະເຈົ້າກໍບໍ່ໄດ້ຊົງບັນດານໃຫ້ພຣະຄຣິດຄືນພຣະຊົນເໝືອນ
ກັນ. 16ເພາະວ່າຖ້າຄົນຕາຍບໍ່ເປັນຄືນມາ ເຖິງແມ່ນພຣະຄຣິດກໍບໍ່ໄດ້ຖືກຊົງບັນດານໃຫ້ຄືນ
ພຣະຊົນ. 17ແລະຖ້າວ່າພຣະຄຣິດບໍ່ໄດ້ຖືກຊົງບັນດານໃຫ້ຄືນພຣະຊົນແລ້ວ ຄວາມເຊື່ອຂອງ
ເຈົ້າທັງຫລາຍກໍໄຮ້ປະໂຫຍດ ເຈົ້າທັງຫລາຍກໍຍັງຄົງຢູ່ໃນຜິດບາບຂອງຕົນ. 18ຊ້ຳກວ່ານັ້ນ,
ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວນັ້ນກໍຈິບຫາຍໄປດ້ວຍ. 19ຖ້າແມ່ນເຮົາທັງຫລາຍ
ໄດ້ວາງໃຈໃນພຣະຄຣິດຝ່າຍຊີວິດນີ້ເທົ່ານັ້ນ[ກ] ພວກເຮົາກໍເປັນຄົນໜ້າສັງເວດທີ່ສຸດໃນໝູ່ຄົນ
ທັງປວງ.

20ແຕ່ທີ່ຈິງພຣະຄຣິດໄດ້ຖືກຊົງບັນດານໃຫ້ຄືນພຣະຊົນແລ້ວ ແລະຊົງເປັນຜົນແຮກໃນພວກ
ຄົນທີ່ລ່ວງລັບໄປແລ້ວນັ້ນ. 21ເພາະວ່າຄວາມຕາຍໄດ້ມີມາທາງມະນຸດສັນໃດ ການຄືນມາຈາກ
ຕາຍກໍມີມາທາງມະນຸດສັນນັ້ນ. 22ດ້ວຍວ່າຄົນທັງປວງໄດ້ຕາຍເພາະກ່ຽວເນື່ອງກັບອາດາມສັນ-
ໃດ ຄົນທັງປວງກໍຈະຖືກຊົງບັນດານໃຫ້ມີຊີວິດເພາະກ່ຽວເນື່ອງກັບພຣະຄຣິດສັນນັ້ນ. 23ແຕ່ຈະ
ເປັນໄປຕາມລຳດັບຂອງແຕ່ລະຄົນ ຄືພຣະຄຣິດຊົງເປັນຜົນແຮກ ຕໍ່ມາກໍແມ່ນຄົນທັງປວງທີ່
ເປັນຢູ່ຝ່າຍພຣະຄຣິດໃນເວລາພຣະອົງສະເດັດມາປະກົດ. 24ຕໍ່ຈາກນັ້ນຈະເປັນຄາວສຸດທ້າຍ
ຄືເມື່ອພຣະອົງຈະຊົງຍົກເລີກການປົກຄອງ ກັບທັງອານຸພາບແລະອຳນາດທຸກໆຢ່າງເສຍ ແລ້ວ

[ກ]ຫລືວ່າ "ຖ້າວ່ານອກຈາກຄວາມຫວັງໃນພຣະຄຣິດສຳລັບຊີວິດນີ້ ເຮົາທັງຫລາຍບໍ່ມີອັນໃດອື່ນອີກ."

ຈະຊົງມອບລາຊະອານາຈັກໄວ້ແກ່ພຣະເຈົ້າ ຄື ພຣະບິດາ. [25]ເພາະວ່າຈຳເປັນພຣະອົງຈະຊົງ
ສະເຫວີຍລາດຢູ່ກ່ອນ ຈົນກວ່າພຣະເຈົ້າຈະຊົງປາບສັດຕູທັງປວງໃຫ້ຢູ່ໃຕ້ພຣະບາດຂອງພຣະ-
ອົງ. [26]ສັດຕູຕົວສຸດທ້າຍທີ່ຈະຖືກຊົງຍົກເລີກເສຍນັ້ນແມ່ນຄວາມຕາຍ. [27]ເຫດວ່າ "ພຣະເຈົ້າ
ໄດ້ຊົງປາບສິ່ງສາລະພັດລົງໃຕ້ພຣະບາດຂອງພຣະອົງແລ້ວ" ແຕ່ເມື່ອພຣະຄຳພີກ່າວວ່າ, "ຊົງ
ປາບສິງສາລະພັດລົງນັ້ນ" ກໍປະກົດຄັກແນ່ວ່າ ເວັ້ນເສຍແຕ່ພຣະຜູ້ຊົງປາບສິ່ງສາລະພັດລົງຢູ່
ໃຕ້ພຣະອົງ. [28]ແລະເມື່ອສິ່ງສາລະພັດໄດ້ຖືກຊົງປາບລົງຢູ່ໃຕ້ພຣະອົງແລ້ວ ເມື່ອນັ້ນອົງພຣະ-
ບຸດຈະຊົງຍອມລົງຢູ່ໃຕ້ພຣະເຈົ້າ ຜູ້ຊົງປາບສິ່ງສາລະພັດລົງຢູ່ໃຕ້ພຣະອົງນັ້ນ ເພື່ອພຣະເຈົ້າ
ຈະໄດ້ຊົງເປັນເອກເປັນໃຫຍ່ໃນສິ່ງສາລະພັດທັງປວງ.

[29]ຖ້າບໍ່ເປັນຢ່າງນັ້ນ ຄົນທັງຫລາຍທີ່ຮັບບັບຕິສະມາເພື່ອຄົນຕາຍນັ້ນເພື່ອຄົນຕາຍນັ້ນຈະ
ໝາຍຄວາມວ່າຢ່າງໃດ ຖ້າພຣະເຈົ້າບໍ່ຊົງບັນດານໃຫ້ຄົນຕາຍຄືນຂຶ້ນມາແທ້ ດ້ວຍເຫດໃດຈຶ່ງມີ
ຄົນຮັບບັບຕິສະມາເພື່ອຄົນຕາຍ. [30]ຝ່າຍພວກເຮົາເຫດສັນໃດເຮົາຈຶ່ງຕ້ອງສ່ຽງໄພອັນຕະລາຍຢູ່
ທຸກເວລາ. [31]ພີ່ນ້ອງທັງຫລາຍເອີຍ, ເຮົາຂໍຢືນຢັນວ່າເຮົາກຳລັງຕາຍຢູ່ທຸກວັນ ທີ່ເຮົາເວົ້າດັ່ງນັ້ນ
ກໍອ້າງຄວາມພາກພູມໃຈ ຊຶ່ງເຮົາມີຢູ່ໃນເຈົ້າທັງຫລາຍ ໂດຍພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າ
ຂອງເຮົາທັງຫລາຍ. [32]ຖ້າເຮົາໄດ້ຕໍ່ສູ້ກັບສັດຮ້າຍທີ່ເມືອງເອເຟໂຊ (ຕາມຄວາມເຫັນຂອງມະ-
ນຸດ) ຈະເປັນປະໂຫຍດອັນໃດແກ່ເຮົາ ຖ້າພຣະເຈົ້າບໍ່ຊົງບັນດານໃຫ້ຄົນຕາຍເປັນຄືນມາອີກ
"ກໍໃຫ້ເຮົາພາກັນກິນແລະດື່ມເທີນ ເພາະວ່າມື້ອື່ນເຮົາກໍຈະຕາຍ." [33]ຢ່າຊູ່ຫລົງຜິດໄປ "ການຄົບ
ກັບຄົນຊົ່ວຍ່ອມເສຍນິໄສ". [34]ເຈົ້າທັງຫລາຍຈົ່ງກັບຄືນມາສູ່ນິໄສອັນເໝາະສົມແລະຢ່າເຮັດຜິດ
ອີກ ເພາະວ່າບາງຄົນຍັງບໍ່ຮູ້ເລື່ອງພຣະເຈົ້າ ທີ່ເຮົາເວົ້າດັ່ງນີ້ກໍເພື່ອພວກເຈົ້າຈະມີຄວາມລະ-
ອາຍ.

## ຮ່າງກາຍທີ່ເປັນຄືນມາ

[35]ແຕ່ບາງຄົນຈະຖາມວ່າ, "ຄົນຕາຍຈະຄືນມາໄດ້ຢ່າງໃດ ເມື່ອເຂົາຄືນມາຈະມີຮ່າງກາຍເປັນ
ຢ່າງໃດ." [36]ໂອ ຄົນຜູ້ໄຮ້ຄວາມຄຶດເອີຍ, ເມັດທີ່ເຈົ້າຫວ່ານລົງດິນນັ້ນ ຖ້າມັນບໍ່ຕາຍເສຍກ່ອນ
ຈະງອກຂຶ້ນໃໝ່ບໍ່ໄດ້. [37]ເມັດທີ່ເຈົ້າຫວ່ານລົງນັ້ນ ຈະແມ່ນເຂົ້າບາເລຫລືແນວອື່ນໆ ກໍດີ ເຈົ້າບໍ່
ໄດ້ຫວ່ານສິ່ງທີ່ເປັນຮູບຮ່າງຂອງຕົ້ນທີ່ຈະງອກຂຶ້ນມານັ້ນ ແຕ່ໄດ້ຫວ່ານເມັດເທົ່ານັ້ນ. [38]ພຣະ-
ເຈົ້າຊົງປະທານຕົ້ນໃຫ້ແກ່ເມັດນັ້ນຕາມທີ່ພຣະອົງຊົງເຫັນຊອບ ແລະຊົງປະທານແກ່ຜັກທຸກຊະ-
ນິດໃຫ້ມີກົກມີຕົ້ນຂອງມັນເອງ. [39](ເນື້ອນັ້ນບໍ່ເໝືອນກັນໝົດທຸກຢ່າງ ເນື້ອມະນຸດກໍຢ່າງໜຶ່ງ,
ເນື້ອສັດສີ່ຕີນກໍຢ່າງໜຶ່ງ, ເນື້ອນົກກໍຢ່າງໜຶ່ງ, ເນື້ອປາກໍຢ່າງໜຶ່ງ. [40]ຮ່າງກາຍສຳລັບສະຫວັນກໍ
ມີແລະຮ່າງກາຍສຳລັບແຜ່ນດິນໂລກກໍມີ ແຕ່ວ່າສະຫງ່າລາສີຂອງຮ່າງກາຍສຳລັບສະຫວັນກໍ
ຢ່າງໜຶ່ງ ແລະສະຫງ່າລາສີຂອງຮ່າງກາຍສຳລັບໂລກກໍຢ່າງໜຶ່ງ. [41]ສະຫງ່າລາສີຂອງດວງອາ-
ທິດກໍຢ່າງໜຶ່ງ, ສະຫງ່າລາສີຂອງດວງຈັນກໍຢ່າງໜຶ່ງ, ສະຫງ່າລາສີຂອງດວງດາວກໍຢ່າງໜຶ່ງ,
ແຕ່ທີ່ຈິງສະຫງ່າລາສີຂອງດວງດາວດວງໜຶ່ງ ກໍຕ່າງກັນກັບສະຫງ່າລາສີຂອງດວງດາວດວງ
ອື່ນໆ).

[42]ສ່ວນການເປັນຄືນມາຂອງຄົນຕາຍກໍເໝືອນດັ່ງນັ້ນແຫລະ ຄື ສິ່ງທີ່ຫວ່ານລົງກໍເປື່ອຍເນົ່າ

ໄປ ແຕ່ສິ່ງທີ່ເປັນຄືນມາກໍບໍ່ຮູ້ເປື່ອຍເນົ່າ. [43]ເມື່ອຫວ່ານລົງນັ້ນບໍ່ມີຍົດ ເມື່ອຄືນຂຶ້ນມາກໍມີສະງ່າ
ລາສີ ເມື່ອຫວ່ານລົງກໍອ່ອນກໍາລັງ ເມື່ອຄືນຂຶ້ນມາກໍມີລິດອໍານາດ. [44]ເມື່ອຫວ່ານລົງກໍເປັນກາຍ
ທໍາມະດາ ເມື່ອຄືນຂຶ້ນມາກໍເປັນກາຍຝ່າຍວິນຍານ ຖ້າມີກາຍທໍາມະດາກໍຄົງມີກາຍຝ່າຍວິນ
ຍານດ້ວຍ. [45]ມີຄໍາຂຽນໄວ້ໃນພຣະຄໍາພີວ່າ, "ມະນຸດຄົນເດີມຄືອາດາມນັ້ນໄດ້ບັງເກີດເປັນຜູ້ມີ
ຊີວິດຢູ່" ອາດາມຜູ້ສຸດທ້າຍຄືພຣະວິນຍານຜູ້ປະທານຊີວິດ. [46]ແຕ່ກາຍທີ່ເກີດມາກ່ອນນັ້ນບໍ່ໃຊ່
ເປັນກາຍຝ່າຍວິນຍານ ແຕ່ເປັນກາຍທໍາມະດາແລະຕໍ່ມາຈຶ່ງມີກາຍຝ່າຍວິນຍານ. [47]ມະນຸດເດີມ
ນັ້ນເກີດມາຈາກດິນຈຶ່ງເປັນຂີ້ຝຸ່ນດິນ ມະນຸດຖ້ອນສອງສະເດັດມາຈາກສະຫວັນ. [48]ຜູ້ທີ່ເກີດມາ
ຈາກດິນເປັນຢ່າງໃດ ຄົນທັງຫລາຍທີ່ເກີດມາຈາກດິນກໍເປັນຢ່າງນັ້ນ ແລະຜູ້ທີ່ສະເດັດມາຈາກ
ສະຫວັນເປັນຢ່າງໃດ ຄົນທັງຫລາຍທີ່ເປັນຝ່າຍສະຫວັນກໍເປັນຢ່າງນັ້ນ. [49]ເຮົາທັງຫລາຍມີລັກ-
ສະນະສົມກັບມະນຸດທີ່ເກີດມາຈາກດິນສັນໃດ ພວກເຮົາກໍຄົງຈະມີລັກສະນະສົມກັບຜູ້ສະເດັດມາ
ຈາກສະຫວັນສັນນັ້ນ.

[50]ພີ່ນ້ອງທັງຫລາຍເອີຍ, ເຮົາກ່າວດັ່ງນີ້ໝາຍຄວາມວ່າ ມະນຸດທໍາມະດາຈະມີສ່ວນໃນລາຊະ
ອານາຈັກຂອງພຣະເຈົ້າບໍ່ໄດ້ ແລະສິ່ງທີ່ເປື່ອຍເນົ່າຈະມີສ່ວນໃນສິ່ງທີ່ບໍ່ເປື່ອຍເນົ່າກໍບໍ່ໄດ້. [51]ນີ້
ແຫລະ, ເຮົາມີຂໍ້ລັບເລິກບອກພວກເຈົ້າວ່າ ເຮົາທັງຫລາຍຈະບໍ່ລ່ວງລັບໄປໝົດທຸກຄົນ ແຕ່ເຮົາ
ທັງຫລາຍຈະຖືກຊົງປ່ຽນແປງໃໝ່ໝົດທຸກຄົນ. [52]ໃນຊົ່ວຂະນະດຽວ, ໃນພັບຕາດຽວ, ເມື່ອເປົ່າ
ແກຄັ້ງສຸດທ້າຍນັ້ນ ດ້ວຍວ່າຈະມີສຽງແກ ແລະຄົນທີ່ຕາຍແລ້ວຈະຖືກຊົງບັນດານໃຫ້ເປັນຄືນ
ຂຶ້ນມາໂດຍບໍ່ເປື່ອຍເນົ່າ ແລະຝ່າຍພວກເຮົາກໍຈະຖືກຊົງປ່ຽນແປງໃໝ່. [53]ເພາະວ່າກາຍທີ່ເປື່ອຍ
ເນົ່ານີ້ຕ້ອງສວມກາຍທີ່ບໍ່ຮູ້ຈັກເປື່ອຍເນົ່າ ແລະກາຍທີ່ຕາຍເປັນນີ້ຕ້ອງສວມກາຍທີ່ຕາຍບໍ່ເປັນ.
[54]ແລະເມື່ອໃດກາຍທີ່ຮູ້ຈັກເປື່ອຍເນົ່ານີ້ຈະໄດ້ສວມກາຍທີ່ບໍ່ຮູ້ຈັກເປື່ອຍເນົ່າ ແລະກາຍທີ່ຕາຍ
ເປັນນີ້ຈະໄດ້ສວມກາຍທີ່ຕາຍບໍ່ເປັນ ເມື່ອນັ້ນແຫລະ, ຄວາມທີ່ຂຽນໄວ້ໃນພຣະຄໍາພີນັ້ນຈະສໍາ-
ເລັດ ຄືວ່າ,

"ຄວາມຕາຍໄດ້ຕົກເຖິງປະລາໄຊແລ້ວ.
[55] ໂອ ຄວາມຕາຍເອີຍ, ໄຊຊະນະຂອງມຶງຢູ່ໃສ
ໂອ ຄວາມຕາຍເຮີຍ, ໄລພິດຂອງມຶງຢູ່ໃສ."

[56]ໄລພິດຂອງຄວາມຕາຍຄືຄວາມບາບ ແລະລິດອໍານາດຂອງຄວາມບາບຄືພຣະບັນຍັດ. [57]ແຕ່
ວ່າຈົ່ງຂອບພຣະຄຸນພຣະເຈົ້າຜູ້ຊົງປະທານໄຊຊະນະແກ່ເຮົາທັງຫລາຍ ດ້ວຍພຣະເຢຊູຄຣິດ
ເຈົ້າຂອງພວກເຮົາ. [58]ດັ່ງນີ້ແຫລະ, ພີ່ນ້ອງທີ່ຮັກຂອງເຮົາເອີຍ, ເຈົ້າທັງຫລາຍຈົ່ງຕັ້ງໝັ້ນຢູ່ ຢ່າ
ຫວັ່ນໄຫວ ຈົ່ງປະຕິບັດງານຂອງອົງພຣະຜູ້ເປັນເຈົ້າໃຫ້ບໍລິບູນທຸກເວລາ ດ້ວຍຮູ້ວ່າໃນອົງ
ພຣະຜູ້ເປັນເຈົ້າ ການຂອງພວກເຈົ້ານັ້ນຈະບໍ່ໄຮ້ປະໂຫຍດ.

# ບົດທີ 16

## ການຄິດສະເລ່ຍຂອງທານຊ່ອຍເຫລືອໄພ່ພົນ

[1]ອັນໜຶ່ງ, ກ່ຽວກັບເລື່ອງຮິບໂຮມຂອງທານສໍາລັບໄພ່ພົນຂອງພຣະເຈົ້ານັ້ນເຮົາໄດ້ສັ່ງຄຣິສ-

ຕະຈັກທັງຫລາຍທີ່ແຂວງຄາລາເຕຍຢ່າງໃດ ພວກເຈົ້າຈົ່ງເຮັດເໝືອນຢ່າງນັ້ນດ້ວຍ. 2ຄືທຸກວັນ
ຕົ້ນສັບປະດາພວກເຈົ້າທຸກຄົນຈົ່ງຄິດສະເລ່ຍບາງສ່ວນຈາກລາຍໄດ້ຂອງຕົນໄວ້ ເພື່ອຈະບໍ່ມີ-
ການແຜ່ເກັບເອົາເມື່ອເວລາເຮົາມານັ້ນ. 3ເມື່ອເຮົາມາເຖິງແລ້ວພວກເຈົ້າເຫັນຊອບຈະເລືອກຜູ້ໃດ
ເຮົາຈະໃຊ້ຜູ້ນັ້ນຖືຈົດໝາຍແລະຂອງທານຂອງເຈົ້າທັງຫລາຍໄປຍັງກຸງເຢຣູຊາເລັມ. 4ຖ້າເຫັນ
ຄວນໃຫ້ເຮົາໄປເອງ ຄົນເຫລົ່ານັ້ນກໍຈະໄປນຳເຮົາ.

## ແຜນການເດີນທາງຂອງໂປໂລ

5ເວລາໃດເຮົາຜ່ານແຂວງມາເກໂດເນຍແລ້ວ ເຮົາຈະມາຫາເຈົ້າທັງຫລາຍ ດ້ວຍວ່າເຮົາຈະ
ມາທາງແຂວງນັ້ນ. 6ແລະເຮົາອາດພັກຢູ່ນຳພວກເຈົ້າເຫິງເຕີບ ບາງທີຈົນໝົດລະດູໜາວກໍເປັນ
ໄດ້ ແລ້ວເຮົາຈະໄປທາງໃດພວກເຈົ້າຈະຊ່ອຍຈັດສົ່ງເຮົາໄປທາງນັ້ນ. 7ເພາະວ່າເຮົາບໍ່ຢາກຈະ
ພົບພວກເຈົ້າພຽງແຕ່ເມື່ອຜ່ານໄປເທົ່ານັ້ນ ແຕ່ເຮົາຫວັງໃຈວ່າ ຖ້າອົງພຣະຜູ້ເປັນເຈົ້າຊົງໂຜດ
ເຮົາຈະຄ້າງຢູ່ກັບເຈົ້າທັງຫລາຍເຫິງໜ້ອຍໜຶ່ງ. 8ແຕ່ເຮົາຈະພັກຢູ່ໃນເມືອງເອເຟໂຊຈົນເຖິງ
ເທດສະການເພັນເຕຄໍສະເຕ. 9ເພາະວ່າທີ່ນີ້ມີປະຕູໄຂໃຫ້ເຮົາຢ່າງກວ້າງຂວາງໜ້າຈະເກີດຜົນ
ທັງຄົນຂັດຂວາງກໍມີຈຳນວນຫລວງຫລາຍດ້ວຍ.

10ຖ້າວ່າຕີໂມທຽວມາຫາພວກເຈົ້າ ພວກເຈົ້າຈົ່ງເອົາໃຈໃສ່ໃຫ້ເພິ່ນໄດ້ຢູ່ກັບເຈົ້າໂດຍຄວາມ
ສະບາຍໃຈ ເພາະວ່າເພິ່ນເຮັດການຂອງອົງພຣະຜູ້ເປັນເຈົ້າເໝືອນກັບເຮົາ. 11ດ້ວຍເຫດນັ້ນຢ່າ
ໃຫ້ຜູ້ໃດດູໝິ່ນເພິ່ນ ແຕ່ຈົ່ງນຳສົ່ງເພິ່ນໄປດ້ວຍຄວາມສຸກ ເພື່ອເພິ່ນຈະກັບມາເຖິງເຮົາ ເພາະເຮົາ
ຄອງຖ້າເພິ່ນພ້ອມດ້ວຍພວກພີ່ນ້ອງ.

12ສ່ວນອາໂປໂລພີ່ນ້ອງຂອງພວກເຮົານັ້ນ, ເຮົາໄດ້ເຕືອນໃຈເພິ່ນຫລາຍເທື່ອແລ້ວເພື່ອໃຫ້ໄປ
ຫາເຈົ້າທັງຫລາຍພ້ອມດ້ວຍພວກພີ່ນ້ອງ ແຕ່ດຽວນີ້ເພິ່ນຍັງບໍ່ເຕັມໃຈຈະໄປ ເມື່ອໃດມີໂອກາດ
ເພິ່ນຈຶ່ງຈະໄປ.

## ຄຳຕັກເຕືອນສຸດທ້າຍແລະຄຳສະແດງຄວາມນັບຖື

13ເຈົ້າທັງຫລາຍຈົ່ງລະວັງໃຫ້ດີ, ຈົ່ງຢືນໝັ້ນໃນຄວາມເຊື່ອ, ຈົ່ງສະແດງຕົວເປັນຜູ້ແກ່ແລ້ວ,
ຈົ່ງເຂັ້ມແຂງຂຶ້ນ. 14ທຸກສິ່ງທີ່ເຈົ້າເຮັດນັ້ນ ຈົ່ງເຮັດດ້ວຍຄວາມຮັກ.

15ເຈົ້າທັງຫລາຍຮູ້ຈັກຄອບຄົວຂອງສະເຕຟານາວ່າ ເຂົາເປັນຄຣິສະຕຽນພວກແຣກໃນ
ແຂວງອະຂາຢາ ແລະພວກເຂົາໄດ້ຖວາຍຕົວໄວ້ໃນການປະຕິບັດໄພ່ພົນຂອງພຣະເຈົ້າ. 16ພີ່-
ນ້ອງເອີຍ, ເຮົາເຕືອນສະຕິ ໃຫ້ເຈົ້າທັງຫລາຍຢູ່ໃຕ້ບັງຄັບຄົນຢ່າງນັ້ນ ແລະຄົນທັງປວງທີ່ຮ່ວມ
ໃນການງານໜັກໜ່ວງນັ້ນ. 17ອັນໜຶ່ງ, ທີ່ສະເຕຟານາແລະຟໍຕູນາໂຕກັບອະຂາອີໂກໄດ້ມາ
ແລ້ວນັ້ນ ເຮົາກໍຍິນດີ ເພາະວ່າສິ່ງທີ່ເຮົາຂາດເຂີນເພາະພວກເຈົ້າບໍ່ຢູ່ນັ້ນ ເຂົາໄດ້ເຮັດໃຫ້ຄົບ
ຖ້ວນແທນແລ້ວ. 18ເພາະເຂົາໄດ້ເຮັດໃຫ້ໃຈຂອງເຮົາກັບໃຈຂອງພວກເຈົ້າເບີກບານ ດ້ວຍເຫດ
ນັ້ນ, ເຈົ້າຈົ່ງຮັບຮູ້ຄຸນຄ່າຂອງຄົນຢ່າງນັ້ນ.

19ຄຣິສຕະຈັກທັງຫລາຍໃນແຂວງອາເຊຍ ກໍຝາກຄວາມຄຶດເຖິງມາຍັງເຈົ້າທັງຫລາຍ ອາກີ-
ລາແລະປີຊະກີລາພ້ອມກັບຄຣິສຕະຈັກທີ່ຢູ່ໃນເຮືອນຂອງເຂົານັ້ນ ກໍຝາກຄວາມຄຶດເຖິງໃນອົງ
ພຣະຜູ້ເປັນເຈົ້າມາຍັງພວກເຈົ້າຢ່າງເຕັມທີ. 20ພີ່ນ້ອງທຸກຄົນຝາກຄວາມຄຶດເຖິງມາຍັງພວກເຈົ້າ

ໃຫ້ເຈົ້າທັງຫລາຍທັກທາຍປາໄສກັນດ້ວຍທຳນຽມຈູບອັນບໍລິສຸດ.
21ຄຳສະແດງຄວາມຄິດເຖິງນີ້ເປັນລາຍມືຂອງເຮົາຄືໂປໂລ.
22ຖ້າຜູ້ໃດບໍ່ຮັກອົງພຣະຜູ້ເປັນເຈົ້າກໍໃຫ້ຜູ້ນັ້ນຖືກປ້ອຍດ່າ ອົງພຣະຜູ້ເປັນເຈົ້າຂອງເຮົາຈະ
ສະເດັດມາ.[ກ]
23ຂໍໃຫ້ພຣະຄຸນຂອງພຣະເຢຊູເຈົ້າ ຈົ່ງສະຖິດຢູ່ກັບເຈົ້າທັງຫລາຍ.
24ຄວາມຮັກຂອງເຮົາມີຢູ່ຕໍ່ເຈົ້າທັງຫລາຍໃນພຣະເຢຊູຄຣິດ.

* * *

[ກ]ພາສາເດີມວ່າ "ມາຣານອາທາ" ອາດແປໄດ້ວ່າ "ຂໍອົງພຣະຜູ້ເປັນເຈົ້າຂອງເຮົາຈົ່ງສະເດັດມາ."

# ຈົດໝາຍຂອງໂປໂລ ເຖິງຄຣິສຕະຈັກໃນເມືອງ ໂກຣິນໂທ ສະບັບທີສອງ

## ບົດທີ 1

1ໂປໂລ ຜູ້ເປັນອັກຄະສາວົກຂອງ ພຣະເຢຊູຄຣິດ ຕາມນ້ຳພຣະໄທຂອງ ພຣະເຈົ້າ ແລະ ຕິ-
ໂມທຽວ ພີ່ນ້ອງຂອງເຮົາ. ເຖິງ ຄຣິສຕະຈັກຂອງ ພຣະເຈົ້າ ທີ່ເມືອງ ໂກຣິນໂທ ກັບໄພ່ພົນທັງ
ປວງຂອງ ພຣະເຈົ້າ ທີ່ຢູ່ທົ່ວແຂວງ ອະຂາຢາ. 2ຂໍພຣະຄຸນແລະສັນຕິສຸກທີ່ມາຈາກ ພຣະບິດາ ເຈົ້າ
ຂອງເຮົາທັງຫລາຍ ແລະຈາກ ພຣະເຢຊູຄຣິດ ເຈົ້າຈົ່ງມີແກ່ເຈົ້າທັງຫລາຍເທີນ.

## ໂປໂລໂມທະນາພຣະຄຸນພຣະເຈົ້າ

3ຈົ່ງສັນລະເສີນ ພຣະເຈົ້າ ຄື ພຣະບິດາ ຂອງ ພຣະເຢຊູຄຣິດ ເຈົ້າຂອງເຮົາທັງຫລາຍຄື ພຣະບິ-
ດາ ຜູ້ຊົງຄວາມເມດຕາ ແລະ ພຣະເຈົ້າ ຜູ້ຊົງເລົ້າໂລມໃຈທຸກຢ່າງ. 4ພຣະອົງຜູ້ຊົງເລົ້າໂລມໃຈ
ເຮົາໃນການທຸກລຳບາກທຸກຢ່າງຂອງເຮົາ ເພື່ອເຮົາຈະສາມາດໄດ້ເລົ້າໂລມໃຈຄົນເຫລົ່ານັ້ນ ທີ່ມີ
ຄວາມທຸກລຳບາກຢ່າງໃດຢ່າງໜຶ່ງ ດ້ວຍຄວາມເລົ້າໂລມໃຈທີ່ເຮົາເອງໄດ້ຮັບມາຈາກ ພຣະເຈົ້າ.
5ເພາະວ່າເຮົາມີສ່ວນທົນທຸກກັບ ພຣະຄຣິດ ຫລາຍ ເຫລືອລົ້ນສັນໃດ ຄວາມເລົ້າໂລມໃຈຂອງເຮົາ
ເນື່ອງຈາກ ພຣະຄຣິດ ກໍຫລາຍ ເຫລືອລົ້ນສັນນັ້ນ. 6ທີ່ເຮົາທົນຄວາມທຸກລຳບາກນັ້ນ ກໍເພື່ອໃຫ້
ເຈົ້າທັງຫລາຍໄດ້ຮັບຄວາມເລົ້າໂລມໃຈແລະຄວາມພົ້ນ ແລະທີ່ເຮົາໄດ້ຮັບຄວາມເລົ້າໂລມໃຈ ກໍ
ເພື່ອໃຫ້ເຈົ້າທັງຫລາຍໄດ້ຮັບຄວາມເລົ້າໂລມໃຈເໝືອນກັນ ຄືຄວາມເລົ້າໂລມໃຈທີ່ຈະໃຫ້ເຈົ້າ
ທັງຫລາຍພຽນສູ້ທົນເອົາຄວາມທຸກ ເໝືອນຢ່າງທີ່ເຮົາສູ້ທົນຢູ່ນັ້ນ. 7ເຮົາຈຶ່ງມີຄວາມຫວັງແນ່-
ນອນໃນເຈົ້າທັງຫລາຍ ເພາະເຮົາຮູ້ວ່າພວກເຈົ້າໄດ້ມີສ່ວນໃນຄວາມທຸກສັນໃດ ເຈົ້າທັງຫລາຍ
ຈະໄດ້ມີສ່ວນໃນຄວາມເລົ້າໂລມໃຈຂອງເຮົາສັນນັ້ນ. 8ພີ່ນ້ອງທັງຫລາຍເອີຍ, ເຮົາຢາກໃຫ້ເຈົ້າ
ທັງຫລາຍຮູ້ເຖິງຄວາມທຸກລຳບາກທີ່ເກີດຂຶ້ນແກ່ເຮົາໃນແຂວງ ອາເຊຍ ຊຶ່ງເຮັດໃຫ້ເຮົາໜັກໃຈ
ເຫລືອກຳລັງ ຈົນເຮົາໝົດຫວັງທີ່ຈະເອົາຊີວິດພົ້ນໄດ້. 9ທີ່ຈິງ, ເຮົາຄາດວ່າເຮົາໄດ້ຖືກໂທດປະ-
ຫານຊີວິດແລ້ວ ແຕ່ທີ່ເປັນດັ່ງນັ້ນ, ກໍເພື່ອບໍ່ໃຫ້ເຮົາໄວ້ໃຈໃນຕົວເອງ ແຕ່ໃຫ້ໄວ້ໃຈໃນ ພຣະເຈົ້າ
ຜູ້ຊົງບັນດານໃຫ້ຄົນທັງປວງຄືນມາຈາກຕາຍ. 10ພຣະອົງນັ້ນໄດ້ຊົງໂຜດໃຫ້ເຮົາພົ້ນຈາກມໍລະ-
ນາໄພ ແລະຈະຊົງໂຜດເຮົາອີກເຮົາໄວ້ໃຈໃນພຣະອົງວ່າຍັງຈະໂຜດໃຫ້ເຮົາພົ້ນອີກຕໍ່ໄປ. 11ຂໍ
ໃຫ້ເຈົ້າທັງຫລາຍຮ່ວມກັນຊ່ອຍໃນການອ້ອນວອນສຳລັບເຮົາດ້ວຍ ເພື່ອວ່າຄົນຈຳນວນຫລາຍ
ຈະໄດ້ຂອບພຣະຄຸນຍ້ອນເຮົາ ເນື່ອງຈາກພຣະຄຸນທີ່ຊົງປະທານແກ່ເຮົາ ອັນເປັນການຊົງຕອບ
ສະໜອງຕໍ່ຄຳອ້ອນວອນຂອງຄົນຈຳນວນຫລາຍ.

## ເລື່ອງເລື່ອນການແວ່ຢາມຂອງໂປໂລ

12ນີ້ເປັນສິ່ງເຮົາອວດອ້າງໄດ້ ຄືວ່າໃຈສຳນຶກຜິດແລະຊອບຂອງເຮົາເປັນພະຍານວ່າເຮົາໄດ້
ສະແດງຕົວຢ່າງແຈ່ມແຈ້ງແກ່ໂລກ ແລະຫລາຍກວ່ານັ້ນກໍຄືສະແດງຕໍ່ໜ້າເຈົ້າທັງຫລາຍ ດ້ວຍ

ນ້ຳໃຈບໍລິສຸດແລະດ້ວຍຄວາມຈິງໃຈທີ່ມາຈາກພຣະເຈົ້າ ແລະບໍ່ໃຊ່ຕາມປັນຍາຂອງໂລກ ແຕ່
ຕາມພຣະຄຸນຊຶ່ງພຣະເຈົ້າໄດ້ຊົງໂຜດປະທານ. 13ເຫດວ່າເຮົາບໍ່ໄດ້ຂຽນເລື່ອງອື່ນເຖິງເຈົ້າທັງ-
ຫລາຍ ນອກຈາກເລື່ອງທີ່ພວກເຈົ້າສາມາດອ່ານແລະເຂົ້າໃຈໄດ້ ເຮົາຫວັງໃຈວ່າພວກເຈົ້າຄົງ
ຈະເຂົ້າໃຈຢ່າງຖ້ວນຖີ່. 14ເໝືອນດັ່ງພວກເຈົ້າໄດ້ເຂົ້າໃຈບາງສ່ວນແລ້ວວ່າ ໃນວັນຂອງພຣະ-
ເຢຊູເຈົ້າຂອງເຮົາທັງຫລາຍ ພວກເຈົ້າຈະມີຄວາມພາກພູມໃຈໃນພວກເຮົາ ຢ່າງດຽວກັນກັບທີ່
ເຮົາຈະມີຄວາມພາກພູມໃຈໃນເຈົ້າທັງຫລາຍ. 15ເພາະຮູ້ສຶກແນ່ໃຈໃນເລື່ອງນີ້ ແຕ່ຫົວທີເຮົາ
ຢາກໄປຫາເຈົ້າທັງຫລາຍ ເພື່ອພວກເຈົ້າຈະໄດ້ປະໂຫຍດສອງເທື່ອ. 16ຄືເຮົາໝາຍໃຈຈະແວ່
ຢາມພວກເຈົ້າລະຫວ່າງທີ່ເດີນທາງໄປຍັງແຂວງມາເກໂດເນຍ ແລະເມື່ອເຮົາກັບມາຈາກແຂວງ
ມາເກໂດເນຍ ກໍຈະແວ່ຢ້ຽມຢາມພວກເຈົ້າອີກ ເພື່ອພວກເຈົ້າຈະໄດ້ຈັດສົ່ງເຮົາໄປເຖິງແຂວງຢູ-
ດາຍ. 17ເມື່ອເຮົາໝາຍໃຈແລ້ວທີ່ຈະເຮັດຢ່າງນັ້ນ ເຮົາໄດ້ປີ້ນແປ່ໄປມາຫລື ຫລືວ່າຄວາມໝາຍ
ໃຈຂອງເຮົາເປັນມາຢ່າງມະນຸດທຳມະດາ ຈົນເຮົາພ້ອມທີ່ຈະກ່າວວ່າ "ເອີໆ" "ບໍ່ໆ" ດັ່ງນັ້ນຫລື.
18ພຣະເຈົ້າຊົງສັດຊື່ທ່ຽງທຳສັນໃດ ຂໍ້ຄວາມຂອງເຮົາທີ່ກ່າວກັບເຈົ້າທັງຫລາຍນັ້ນຈຶ່ງບໍ່ເປັນຄຳ
"ເອີໆ" "ບໍ່ໆ." 19ເພາະວ່າພຣະບຸດຂອງພຣະເຈົ້າຄືພຣະເຢຊູຄຣິດ ຜູ້ຊຶ່ງເຮົາກັບຊີລາວານ
ແລະຕີໂມທຽວໄດ້ປະກາດໃນຖ້າມກາງພວກເຈົ້ານັ້ນ ກໍບໍ່ໃຊ່ເປັນຄຳ "ຈິງ" ແລະ "ບໍ່ຈິງ" ແຕ່
ໃນພຣະອົງນັ້ນລ້ວນແລ້ວແຕ່ຄຳຈິງ. 20ບັນດາພຣະສັນຍາຂອງພຣະເຈົ້າກໍຈິງໂດຍພຣະເຢຊູ
ເພາະເຫດນີ້ເຮົາຈຶ່ງເວົ້າວ່າ "ອາແມນ" ໂດຍພຣະອົງ ເພື່ອເປັນທີ່ຖວາຍພຣະກຽດແກ່ພຣະເຈົ້າ.
21ຜູ້ຊຶ່ງຊົງຕັ້ງພວກເຮົາກັບເຈົ້າທັງຫລາຍໄວ້ໃນພຣະຄຣິດ ແລະໄດ້ຊົງທົດສົງຕັ້ງພວກເຮົາໄວ້
ນັ້ນກໍຄືພຣະເຈົ້າ. 22ພຣະອົງໄດ້ຊົງປະທັບຕາໃສ່ພວກເຮົາ ແລະປະທານພຣະວິນຍານໄວ້ໃນ
ໃຈຂອງພວກເຮົາເປັນມັດຈຳດ້ວຍ.

23ຝ່າຍເຮົາຈຶ່ງທູນຂໍພຣະເຈົ້າຊົງເປັນພະຍານຝ່າຍຈິດໃຈຂອງເຮົາວ່າ ທີ່ເຮົາຍັງບໍ່ໄດ້ໄປເຖິງ
ເມືອງໂກຣິນໂທນັ້ນ ກໍເພື່ອຈະງົດໂທດຂອງເຈົ້າທັງຫລາຍໄວ້ກ່ອນ. 24ບໍ່ໃຊ່ວ່າເຮົາເປັນນາຍ
ບັງຄັບຄວາມເຊື່ອຂອງພວກເຈົ້າ ເພາະວ່າພວກເຈົ້າຢືນໝັ້ນຢູ່ໃນຄວາມເຊື່ອແລ້ວ ແຕ່ວ່າເຮົາ
ເປັນຜູ້ຮ່ວມງານເພື່ອເຈົ້າຈະຮັບຄວາມຊົມຊື່ນຍິນດີ.

# ບົດທີ 2

1ເຮົາໄດ້ຕັ້ງໃຈດັ່ງນີ້ວ່າຈະບໍ່ມາຫາພວກເຈົ້າອີກເມື່ອມີຄວາມທຸກໂສກຢູ່. 2ເພາະຖ້າເຮົາເຮັດ
ໃຫ້ພວກເຈົ້າເປັນທຸກໂສກ ແມ່ນໃຜຈະເຮັດໃຫ້ເຮົາມີຄວາມຍິນດີ ກໍຄືຜູ້ທີ່ເຮົາເຮັດໃຫ້ມີຄວາມ-
ທຸກໂສກນັ້ນແຫລະ. 3ແລະເຮົາໄດ້ຂຽນຂໍ້ຄວາມນັ້ນ ເພື່ອວ່າເມື່ອເຮົາມາ, ເຮົາຈະບໍ່ໄດ້ຄວາມ-
ທຸກໂສກຈາກຄົນເຫລົ່ານັ້ນ ທີ່ຄວນຈະເຮັດໃຫ້ເຮົາມີຄວາມຊົມຊື່ນຍິນດີ ເຮົາໄວ້ໃຈໃນພວກເຈົ້າ
ວ່າ ຄວາມຍິນດີຂອງເຮົາກໍເປັນຄວາມຍິນດີຂອງເຈົ້າທັງປວງດ້ວຍ. 4ເນື່ອງດ້ວຍຄວາມທຸກລຳ-
ບາກແລະຄວາມທຸກຮ້ອນໃຈຫລາຍ ເຮົາຈຶ່ງໄດ້ຂຽນມາຍັງເຈົ້າທັງຫລາຍນັ້ນດ້ວຍນ້ຳຕາໄຫລ ບໍ່
ໃຊ່ເພື່ອຈະໃຫ້ພວກເຈົ້າເປັນທຸກໂສກ ແຕ່ເພື່ອຈະໃຫ້ເຈົ້າທັງຫລາຍຮູ້ຈັກຄວາມຮັກອັນລົ້ນເຫລືອ
ທີ່ເຮົາມີຕໍ່ພວກເຈົ້ານັ້ນ.

## ການໃຫ້ອະໄພແກ່ຜູ້ທີ່ເຮັດໃຫ້ເກີດຄວາມທຸກໂສກ

[5]ຖ້າຜູ້ໃດເປັນຕົ້ນເຫດເຮັດໃຫ້ເກີດຄວາມທຸກໂສກ ຜູ້ນັ້ນກໍບໍ່ໄດ້ເຮັດໃຫ້ເຮົາເປັນທຸກໂສກແຕ່ຜູ້
ດຽວ ແຕ່ໄດ້ເຮັດໃຫ້ບາງຄົນໃນພວກເຈົ້າເປັນທຸກໂສກດ້ວຍ (ທີ່ວ່າບາງຄົນນັ້ນກໍຄືເຮົາບໍ່ຢາກ
ເວົ້າໃສ່ຜູ້ນັ້ນຈົນເກີນໄປ). [6]ທີ່ຄົນສ່ວນຫລາຍໄດ້ລົງໂທດໃສ່ຄົນຢ່າງນັ້ນກໍພໍສົມຄວນແລ້ວ.
[7]ສັນນັ້ນເຈົ້າທັງຫລາຍຄວນຈະຍົກໂທດໃຫ້ຜູ້ນັ້ນ ແລະໃຫ້ເພິ່ນໄດ້ຮັບຄວາມບັນເທົາທຸກກໍດີກວ່າ
ຢ້ານວ່າຄົນນັ້ນຈະຈົມລົງໃນຄວາມທຸກໂສກອັນເຫລືອລົ້ນ. [8]ດັ່ງນັ້ນເຮົາວອນຂໍພວກເຈົ້າໃຫ້ສະ-
ແດງຄວາມຮັກຢ່າງຄັກແນ່ຕໍ່ຄົນນັ້ນອີກ. [9]ນີ້ຄືເຫດທີ່ເຮົາໄດ້ຂຽນເຖິງເຈົ້າທັງຫລາຍ ເພື່ອຫວັງ
ຈະລອງເບິ່ງພວກເຈົ້າວ່າ ພວກເຈົ້າຈະຍອມເຊື່ອຟັງທຸກສິ່ງທຸກປະການຫລືບໍ່. [10]ຖ້າພວກເຈົ້າຈະ
ຍົກໂທດໃຫ້ຜູ້ໃດ ເຮົາກໍຈະຍົກໂທດໃຫ້ຜູ້ນັ້ນເໝືອນກັນ ຖ້າເຮົາໄດ້ຍົກໂທດຂອງຜູ້ໃດແລ້ວ
ເຮົາໄດ້ຍົກໂທດຂອງຜູ້ນັ້ນເພາະເຫັນແກ່ເຈົ້າທັງຫລາຍຕໍ່ພຣະພັກຂອງ ພຣະຄຣິດ. [11]ເພື່ອບໍ່ໃຫ້
ຊາຕານມີໄຊເໜືອພວກເຮົາ ເພາະເຮົາຮູ້ແຜນການຂອງມັນແລ້ວ.

## ຄວາມກະວົນກະວາຍຂອງໂປໂລທີ່ເມືອງໂທອາດ

[12]ເມື່ອເຮົາໄປເຖິງເມືອງ ໂທອາດ ເພື່ອປະກາດຂ່າວປະເສີດເລື່ອງ ພຣະຄຣິດນັ້ນ ອົງ ພຣະ-
ຜູ້ເປັນເຈົ້າ ໄດ້ຊົງໄຂຊ່ອງທາງໃຫ້ແກ່ເຮົາ. [13]ເຖິງປານນັ້ນເຮົາກໍບໍ່ມີຄວາມສະບາຍໃຈ ເພາະບໍ່
ໄດ້ພົບ ຕີໂຕ ນ້ອງຂອງເຮົາທີ່ນັ້ນ ເຮົາຈຶ່ງໄດ້ລາພວກນັ້ນເດີນທາງໄປຍັງແຂວງ ມາເກໂດເນຍ.

## ຄວາມມີໄຊໃນພຣະຄຣິດ

[14]ແຕ່ຈົ່ງຂອບພຣະຄຸນ ພຣະເຈົ້າ ຜູ້ຊົງໂຜດນຳເຮົາທຸກເວລາຕໍ່ໄປຕາມກະບວນ ຝ່າຍຄວາມ
ໄຊຊະນະໂດຍ ພຣະຄຣິດ ແລະຊົງໂຜດປະທານກິ່ນຫອມຂອງຄວາມຮູ້ຈັກພຣະອົງ ໃຫ້ປະກົດ
ດ້ວຍເຮົາໃນທຸກບ່ອນ. [15]ດ້ວຍວ່າເຮົາທັງຫລາຍເປັນກິ່ນອັນຫອມຫວານທີ່ ພຣະຄຣິດ ຖວາຍແກ່
ພຣະເຈົ້າ ໃນທ່າມກາງຄົນທັງຫລາຍທີ່ກຳລັງຊົງໂຜດໃຫ້ພົ້ນ ແລະໃນທ່າມກາງຄົນທັງຫລາຍທີ່
ກຳລັງຈິບຫາຍດ້ວຍ. [16]ຝ່າຍໜຶ່ງເປັນກິ່ນຂອງຄວາມຕາຍຊຶ່ງຈະນຳໄປສູ່ຄວາມຕາຍ ຝ່າຍໜຶ່ງ
ອີກເປັນກິ່ນຫອມຂອງຊີວິດຊຶ່ງນຳໄປສູ່ຊີວິດ ໃຜໜໍຈະພໍສົມກັບສິ່ງທັງຫລາຍນີ້. [17]ດ້ວຍວ່າເຮົາ
ບໍ່ເໝືອນຫລາຍຄົນ ທີ່ເອົາພຣະທຳຂອງ ພຣະເຈົ້າ ມາປອມແປງແລະຂາຍກິນແຕ່ເນື່ອງດ້ວຍເຮົາ
ໄດ້ຮັບໃຊ້ມາຈາກ ພຣະເຈົ້າ ເຮົາຈຶ່ງກ່າວດ້ວຍຄວາມສັດຊື່ຕໍ່ພຣະພັກຂອງ ພຣະເຈົ້າ ເໝືອນ
ຢ່າງຜູ້ຮັບໃຊ້ຂອງ ພຣະຄຣິດ.

# ບົດທີ 3

## ຜູ້ຮັບໃຊ້ພຣະສັນຍາໃໝ່

[1]ເຮົາກຳລັງຈະຍ້ອງຍໍຕົວເຮົາເອງຫລື ຫລືວ່າເຮົາຕ້ອງການໜັງສືແນະນຳຕົວມາໃຫ້ແກ່ພວກ
ເຈົ້າເໝືອນຢ່າງບາງຄົນຫລື ເຮົາຕ້ອງການໜັງສືນຳຕົວຈາກພວກເຈົ້າຫລື. [2]ແມ່ນເຈົ້າທັງຫລາຍ
ນັ້ນແຫລະ, ເປັນໜັງສືຂອງເຮົາທີ່ຈາລຶກໄວ້ໃນຫົວໃຈຂອງເຮົາໃຫ້ຄົນທັງປວງໄດ້ຮູ້ແລະໄດ້
ອ່ານ. [3]ເຈົ້າທັງຫລາຍປະກົດອອກເປັນໜັງສືທີ່ມາຈາກ ພຣະຄຣິດ ທີ່ເຮົາເປັນຜູ້ສົ່ງໂດຍບໍ່ໄດ້ຊົງ
ຂຽນດ້ວຍນ້ຳໝຶກ ແຕ່ຊົງຂຽນດ້ວຍ ພຣະວິນຍານ ຂອງ ພຣະເຈົ້າ ຜູ້ຊົງພຣະຊົນຢູ່ ແລະບໍ່ໄດ້ຊົງ

ຂຽນໄວ້ທີ່ແຜ່ນຫີນແຕ່ຊົງຂຽນໃສ່ແຜ່ນເນື້ອທີ່ເປັນຫົວໃຈ.
4ເຮົາມີຄວາມໄວ້ໃຈໃນ ພຣະເຈົ້າ ໂດຍ ພຣະຄຣິດ ຢ່າງນັ້ນ. 5ບໍ່ໃຊ່ເຮົາຈະຄຶດຖືວ່າ ສິ່ງໜຶ່ງສິ່ງ
ໃດໄດ້ເກີດຈາກຄວາມສາມາດຂອງເຮົາເອງ ແຕ່ຄວາມສາມາດຂອງເຮົາມາຈາກ ພຣະເຈົ້າ. 6ຄື
ຜູ້ຊົງໂຜດປະທານໃຫ້ເຮົາສາມາດທີ່ຈະເປັນຜູ້ຮັບໃຊ້ຝ່າຍພຣະສັນຍາໃໝ່ ຊຶ່ງບໍ່ໄດ້ປະກອບດ້ວຍ
ຕົວອັກສອນ ແຕ່ປະກອບດ້ວຍ ພຣະວິນຍານ ດ້ວຍວ່າຕົວອັກສອນນັ້ນປະຫານໃຫ້ຕາຍ ແຕ່
ສ່ວນ ພຣະວິນຍານ ນັ້ນຊົງປະທານໃຫ້ມີຊີວິດ.
7ແຕ່ຖ້າການປະຕິບັດທີ່ນຳໄປເຖິງຄວາມຕາຍ ຄືການປະຕິບັດຕາມຕົວອັກສອນຊຶ່ງຊົງຈາລຶກ
ໄວ້ທີ່ແຜ່ນຫີນນັ້ນຍັງມາດ້ວຍລັດສະໝີ ເຖິງແມ່ນວ່າເປັນລັດສະໝີທີ່ຈາງຫາຍໄປ ກໍຍັງເຮັດໃຫ້
ພວກ ອິສຣາເອນ ເບິ່ງໜ້າຂອງ ໂມເຊ ບໍ່ໄດ້. 8ດັ່ງນັ້ນການປະຕິບັດຕາມ ພຣະວິນຍານ ຈະບໍ່ມີ
ລັດສະໝີຫລາຍກວ່ານັ້ນອີກຫລື. 9ເພາະວ່າຖ້າການປະຕິບັດຊຶ່ງໃຫ້ມີການພິພາກສາລົງໂທດຍັງ
ມີລັດສະໝີ ການປະຕິບັດສຳລັບໃຫ້ມີຄວາມຊອບທຳກໍຈະມີລັດສະໝີມີລົ້ນກວ່ານັ້ນອີກ. 10ໝາຍ
ຄວາມວ່າ ລັດສະໝີທີ່ຊົງປະທານໃຫ້ນັ້ນກໍອັບແສງໄປແລ້ວ ເພາະຖືກລັດສະໝີອັນຮຸ່ງເຮືອງ
ກວ່າໄດ້ສ່ອງແສງຂົ່ມໄວ້. 11ດ້ວຍວ່າຖ້າສິ່ງທີ່ໄດ້ຈາງໄປຍັງມີລັດສະໝີພຽງນັ້ນ ສິ່ງທີ່ຕັ້ງຢູ່ຖາ-
ວອນຄົງມີລັດສະໝີຫລາຍກວ່ານັ້ນອີກ. 12ເຫດສັນນັ້ນ ເມື່ອເຮົາມີຄວາມຫວັງໃຈຢ່າງນັ້ນແລ້ວ
ເຮົາກໍມີໃຈກ້າຫລາຍຂຶ້ນ. 13ບໍ່ໃຊ່ເໝືອນດັ່ງ ໂມເຊ ທີ່ເອົາຜ້າປົກໜ້າໄວ້ ເພື່ອບໍ່ໃຫ້ພວກ ອິສຣາ-
ເອນ ເຫັນອາວະສານຂອງສິ່ງທີ່ກຳລັງຍົກເລີກເສຍນັ້ນ. 14ແຕ່ຈິດໃຈຂອງເຂົາປຶກຕັນໄປ ເພາະ-
ວ່າຈົນເຖິງທຸກວັນນີ້, ເມື່ອເຂົາອ່ານພຣະສັນຍາເດີມ, ຜ້າປົກໜ້າຢ່າງດຽວນັ້ນຍັງຄົງຢູ່ບໍ່ໄດ້ປົດ
ອອກ ເພາະຜ້າຜືນນັ້ນຖືກຊົງປົດອອກໄດ້ກໍໂດຍ ພຣະຄຣິດ ເທົ່ານັ້ນ. 15ແຕ່ວ່າຕະຫລອດມາເຖິງ
ທຸກວັນນີ້ ເມື່ອໃດເຂົາອ່ານພຣະທຳ ໂມເຊ ກໍມີຜ້າປົກປິດໃຈຂອງເຂົາຢູ່. 16"ແຕ່ວ່າເມື່ອໃດທ່ານ
ຫລິບເຂົ້າໄປເຝົ້າອົງ ພຣະຜູ້ເປັນເຈົ້າ ຜ້າປົກນັ້ນຈຶ່ງຍົກອອກເສຍ." 17ຄຳວ່າ "ອົງ ພຣະຜູ້ເປັນ-
ເຈົ້າ" ນັ້ນໝາຍເຖິງ ພຣະວິນຍານ ແລະ ພຣະວິນຍານ ຂອງອົງ ພຣະຜູ້ເປັນເຈົ້າ ຊົງຢູ່ທີ່ໃດ ເສລີ-
ພາບກໍມີຢູ່ທີ່ນັ້ນ. 18ແຕ່ເຮົາທັງຫລາຍບໍ່ມີຜ້າປົກໜ້າແລ້ວ ຕົວພວກເຮົາຈຶ່ງສະທ້ອນແສງແຫ່ງ
ພຣະສະຫງ່າລາສີຂອງອົງ ພຣະຜູ້ເປັນເຈົ້າ ແລະພຣະສະຫງ່າລາສີທີ່ມາຈາກອົງ ພຣະຜູ້ເປັນ-
ເຈົ້າ ຊຶ່ງ ເປັນ ພຣະວິນຍານ ນັ້ນ ກໍຊົງ ເຮັດ ໃຫ້ ເຮົາທັງຫລາຍປ່ຽນ ມີລັກສະນະ ເໝືອນພຣະອົງ
ໂດຍມີສະຫງ່າລາສີເປັນລຳດັບຂຶ້ນໄປ.

# ບົດທີ 4

## ຂອງທີ່ມີຄ່າໃນພາຊະນະດິນ

1ເພາະເຫດທີ່ເຮົາໄດ້ຮັບໃຊ້ໃນການບົວລະບັດນີ້ໂດຍໄດ້ຮັບພຣະກະລຸນາ ເຮົາຈຶ່ງບໍ່ທໍ້ຖອຍ.
2ເຮົາໄດ້ປະຖິ້ມການບັງລັບອັນເປັນທີ່ໜ້າອັບອາຍນັ້ນ ເຮົາບໍ່ໄດ້ເຮັດກົນອຸບາຍ ແລະບໍ່ໄດ້ປອມ
ແປງພຣະທຳຂອງ ພຣະເຈົ້າ ແຕ່ວ່າໄດ້ສະແດງຄວາມສັດຈິງໃຫ້ປະກົດແຈ້ງ ເຮົາກໍພະຍາຍາມ
ເຮັດໃຫ້ຕົວເປັນທີ່ຊອບແກ່ໃຈສຳນຶກຜິດແລະຊອບຂອງຄົນທັງປວງຕໍ່ພຣະພັກ ພຣະເຈົ້າ. 3ແຕ່
ຖ້າຂ່າວປະເສີດທີ່ເຮົາປະກາດນັ້ນຖືກປົກບັງໄວ້ ກໍປົກບັງຈຳພວກຄົນທັງຫລາຍທີ່ກຳລັງຈິບຫາຍ

ໄປ. 4ສ່ວນຄົນເຫລົ່ານັ້ນທີ່ບໍ່ເຊື່ອພະຂອງສະໄໝນີ້ໄດ້ເຮັດໃຫ້ໃຈຂອງເຂົາມືດໄປ ເພື່ອບໍ່ໃຫ້ເຂົາ
ໄດ້ເຫັນແສງສະຫວ່າງຂອງຂ່າວປະເສີດເລື່ອງພຣະສະຫງ່າລາສີຂອງພຣະຄຣິດ ຜູ້ຊົງມີລັກ-
ສະນະຢ່າງພຣະເຈົ້າ. 5ເຮົາບໍ່ໄດ້ປະກາດຕົວເຮົາເອງ ແຕ່ໄດ້ປະກາດພຣະຄຣິດຄືພຣະເຢຊູວ່າ
ຊົງເປັນອົງພຣະຜູ້ເປັນເຈົ້າ ແລະປະກາດຕົວເຮົາເອງວ່າເປັນຜູ້ຮັບໃຊ້[ກ] ຂອງເຈົ້າທັງຫລາຍ
ເພາະເຫັນແກ່ພຣະເຢຊູ. 6ດ້ວຍວ່າພຣະເຈົ້າອົງນັ້ນຜູ້ໄດ້ຊົງກ່າວໄວ້ວ່າ, "ຄວາມສະຫວ່າງຈະ
ສ່ອງອອກມາຈາກຄວາມມືດ" ໄດ້ຊົງສ່ອງສະຫວ່າງເຂົ້າໃນໃຈຂອງເຮົາ ເພື່ອເຮົາຈະໄດ້ມີຄວາມ
ສະຫວ່າງແຫ່ງຄວາມຮູ້ເຖິງພຣະສະຫງ່າລາສີຂອງພຣະເຈົ້າ ຊຶ່ງປະກົດແຈ້ງໃນພຣະພັກຂອງ
ພຣະຄຣິດ.

7ແຕ່ວ່າຂອງທີ່ມີຄ່ານີ້ເຮົາມີຢູ່ໃນພາຊະນະດິນ ເພື່ອໃຫ້ເຫັນວ່າລິດເດດອັນເລີດປະເສີດນັ້ນ
ຈະເປັນຂອງພຣະເຈົ້າ ບໍ່ໃຊ່ເປັນຂອງເຮົາເອງ. 8ເຮົາຖືກຄວາມທຸກລຳບາກອ້ອມຂ້າງ ແຕ່ບໍ່
ເຖິງອັດຕະຄັດ ເຮົາຈົນປັນຍາ ແຕ່ຍັງບໍ່ໝົດທາງອອກ. 9ເຮົາຖືກສັດຕູໄລ່ ແຕ່ກໍບໍ່ເຖິງຕົກໃນ
ເງື້ອມມືເຂົາ ເຮົາຖືກຕີລົ້ມແລ້ວ ແຕ່ວ່າບໍ່ເຖິງຕາຍ. 10ຕົວຂອງເຮົາຍອມຢູ່ໃກ້ກັບຄວາມຕາຍ
ເໝືອນຢ່າງພຣະເຢຊູຢູ່ສະເໝີ ເພື່ອຊີວິດຂອງພຣະເຢຊູຈະໄດ້ປະກົດໃນຕົວເຮົາດ້ວຍ.
11ເພາະວ່າເຮົາທີ່ມີຊີວິດຢູ່ນັ້ນ ກໍຕ້ອງຖືກມອບໄວ້ແກ່ຄວາມຕາຍຢູ່ສະເໝີເພາະເຫັນແກ່ພຣະ-
ເຢຊູ ເພື່ອຊີວິດຂອງພຣະອົງຈະໄດ້ປະກົດໃນເນື້ອກາຍອັນຕາຍເປັນຂອງເຮົາເໝືອນກັນ.
12ດັ່ງນັ້ນຄວາມຕາຍຈຶ່ງກຳລັງສະແດງລິດຢູ່ໃນພວກເຮົາ ແຕ່ຊີວິດກຳລັງສະແດງລິດຢູ່ໃນພວກ
ເຈົ້າ. 13ເຮົາມີໃຈເຊື່ອຢ່າງດຽວກັນກັບຜູ້ທີ່ຂຽນໄວ້ແລ້ວວ່າ, "ຂ້າພະເຈົ້າໄດ້ເຊື່ອ ເພາະສັນນັ້ນ
ຂ້າພະເຈົ້າຈຶ່ງໄດ້ກ່າວໄວ້" ເຮົາກໍເຊື່ອເໝືອນກັນ ເພາະສັນນັ້ນເຮົາຈຶ່ງກ່າວໄວ້. 14ເຮົາຮູ້ວ່າ
ພຣະອົງຜູ້ຊົງບັນດານໃຫ້ພຣະເຢຊູເຈົ້າຄືນພຣະຊົນ ກໍຈະຊົງບັນດານໃຫ້ເຮົາຄືນຂຶ້ນມາກັບ
ພຣະເຢຊູເໝືອນກັນ ແລະຈະຊົງນຳພາເຮົາເຂົ້າມາເຝົ້າພ້ອມກັນກັບເຈົ້າທັງຫລາຍ. 15ເພາະວ່າ
ສິ່ງສາລະພັດນັ້ນເປັນໄປເພື່ອປະໂຫຍດຂອງເຈົ້າທັງຫລາຍ ເພື່ອວ່າເມື່ອພຣະຄຸນມາເຖິງຄົນເປັນ
ຈຳນວນຫລວງຫລາຍ ກໍຈະມີການຂອບພຣະຄຸນຫລາຍຂຶ້ນເໝືອນກັນ ຈຶ່ງເປັນການຖວາຍ
ພຣະກຽດແກ່ພຣະເຈົ້າ.

## ການດຳເນີນຊີວິດດ້ວຍອາໃສຄວາມເຊື່ອ

16ເຫດສັນນັ້ນເຮົາຈຶ່ງບໍ່ທໍ້ຖອຍ ເຖິງແມ່ນວ່າກາຍພາຍນອກຂອງເຮົາກຳລັງຊຸດໂຊມໄປ ແຕ່
ໃຈພາຍໃນນັ້ນກໍຍັງຈະເລີນຂຶ້ນໃໝ່ທຸກໆ ວັນ. 17ເຫດວ່າການທຸກລຳບາກອັນເບົາບາງທີ່ມີຢູ່
ເປັນຊົ່ວຂະນະໜຶ່ງນັ້ນ ກໍກຳລັງຈັດໃຫ້ເຮົາມີສະຫງ່າລາສີຢ່າງຖາວອນຫລາຍ ຫາທີ່ປຽບບໍ່ໄດ້.
18ເພາະວ່າເຮົາບໍ່ໄດ້ເຫັນແກ່ສິ່ງທີ່ຕາເຫັນຢູ່ ແຕ່ເຫັນແກ່ສິ່ງທີ່ຕາບໍ່ເຫັນ ດ້ວຍວ່າສິ່ງທີ່ຕາເຫັນຢູ່
ນັ້ນກໍເປັນຂອງຊົ່ວຄາວ ແຕ່ສິ່ງທີ່ຕາບໍ່ເຫັນນັ້ນກໍຖາວອນເປັນນິດ.

# ບົດທີ 5

1ເພາະເຮົາຮູ້ແລ້ວວ່າ ຖ້າວ່າເຮືອນຂອງເຮົາໃນໂລກນີ້ຄືຮ່າງກາຍນັ້ນໄດ້ຖືກມ້າງລົງເສຍ ເຮົາ

[ກ]ພາສາເດີມວ່າ "ຂ້ອຍຂ້າ."

ກໍຍັງມີບ່ອນຢູ່ອາໃສຊຶ່ງ ພຣະເຈົ້າ ຊົງໂຜດປະທານໃຫ້ ເປັນບ່ອນຢູ່ທີ່ບໍ່ໄດ້ສ້າງດ້ວຍມືມະນຸດ
ແລະຊົງຕັ້ງຢູ່ຖາວອນເປັນນິດໃນສະຫວັນ. [2]ເພາະວ່າທີ່ຈິງ, ໃນຮ່າງກາຍນີ້ເຮົາຍັງໂອ່ຍອາໄລຢູ່
ປາດຖະໜາຫາຍ່າງຮ້ອນຮົນຢາກຫົ່ມເອົາທີ່ຢູ່ຂອງເຮົາອັນມາແຕ່ສະຫວັນ. [3]ເພື່ອວ່າເມື່ອເຮົາຫົ່ມ
ແລ້ວ ເຮົາຈະບໍ່ປະກົດເໝືອນປະເປືອຍ. [4]ເພາະວ່າເຮົາຜູ້ອາໃສໃນຮ່າງກາຍນີ້ ຈຶ່ງໂອ່ຍອາໄລ
ເປັນທຸກໃຈຢ່າງໜັກໜ່ວງ ບໍ່ໃຊ່ປາດຖະໜາຢາກຢູ່ຕົວເປົ່າ ແຕ່ປາດຖະໜາຢາກຫົ່ມກາຍໃໝ່
ນັ້ນເພື່ອວ່າຮ່າງກາຍທີ່ຕາຍເປັນນີ້ຈະໄດ້ຖືກຖ້ວມລົ້ນດ້ວຍຊີວິດ. [5]ແຕ່ແມ່ນ ພຣະເຈົ້າ ຊົງເປັນຜູ້
ຈັດແຈງເຮົາໄວ້ສຳລັບການປ່ຽນແປງນີ້ ແລະພຣະອົງໄດ້ຊົງໂຜດປະທານ ພຣະວິນຍານ ເປັນ
ເຄື່ອງມັດຈຳໄວ້ກັບເຮົາ. [6]ດ້ວຍເຫດນັ້ນເຮົາຈຶ່ງມີໃຈກ້າຢູ່ສະເໝີ ດ້ວຍຮູ້ວ່າຂະນະເມື່ອເຮົາຢູ່ໃນ
ເຮືອນ ຄືຮ່າງກາຍນີ້ ເຮົາກໍຢູ່ຫ່າງຈາກເຮືອນ ຊຶ່ງຢູ່ໃນອົງ ພຣະຜູ້ເປັນເຈົ້າ. [7]ດ້ວຍວ່າເຮົາດຳ-
ເນີນໄປຕາມຄວາມເຊື່ອ ບໍ່ໃຊ່ຕາມທີ່ຕາເຫັນ. [8]ເຮົາມີໃຈກ້າແລະພໍໃຈທີ່ຈະອອກຈາກເຮືອນ ຄື
ຮ່າງກາຍນີ້ ໄປຢູ່ເຮືອນກັບອົງ ພຣະຜູ້ເປັນເຈົ້າ ກໍດີກວ່າ. [9]ເຫດສັນນັ້ນເຮົາຕັ້ງເປົ້າໝາຍຂອງ
ເຮົາວ່າ ຖ້າເຮົາຢູ່ໃນເຮືອນ ຄືຮ່າງກາຍນີ້ຫລືບໍ່ຢູ່ກໍດີ ເຮົາກໍຈະພະຍາຍາມເຮັດໃຫ້ເປັນທີ່ຊອບ
ພຣະໄທຂອງພຣະອົງ. [10]ດ້ວຍວ່າຈຳເປັນທີ່ເຮົາທຸກຄົນຈະຕ້ອງປະກົດຕົວຕໍ່ໜ້າບັນລັງພິພາກສາ
ຂອງ ພຣະຄຣິດ ເພື່ອທຸກຄົນຈະໄດ້ຮັບສົມກັບການທີ່ຕົນໄດ້ເຮັດໃນຮ່າງກາຍນີ້ ແລ້ວແຕ່ຈະດີ
ຫລືຊົ່ວ.

## ການຄືນດີກັນກັບພຣະເຈົ້າທາງພຣະຄຣິດ

[11]ເພາະເຫດທີ່ເຮົາຮູ້ຈັກຄວາມຢຳເກງອົງ ພຣະຜູ້ເປັນເຈົ້າ ແລ້ວ ເຮົາຈຶ່ງຊັກຊວນຄົນທັງ-
ຫລາຍ ເຮົາເປັນຢ່າງໃດ ພຣະເຈົ້າ ກໍຊົງຊາບຢູ່ແລ້ວ ແລະເຮົາຫວັງໃຈວ່າໃຈສຳນຶກຜິດແລະ
ຊອບຂອງພວກເຈົ້າຄົງຮູ້ຈັກເຮົາເໝືອນກັນ. [12]ນີ້ບໍ່ແມ່ນເຮົາຍ້ອງຍໍຕົວເຮົາເອງຕໍ່ເຈົ້າທັງຫລາຍ
ອີກ ແຕ່ເຮົາໃຫ້ພວກເຈົ້າມີໂອກາດທີ່ຈະນຳເຮົາອອກອວດໄດ້ ເພື່ອເຈົ້າທັງຫລາຍຈະໄດ້ມີຂໍ້ໂຕ້
ຕອບແກ່ຄົນທັງຫລາຍທີ່ມັກອວດໃນສິ່ງພາຍນອກ ບໍ່ແມ່ນສິ່ງທີ່ຢູ່ໃນໃຈ. [13]ເພາະວ່າຖ້າເຮົາໄດ້
ເຮັດຢ່າງຄົນເສຍຈິດ ເຮົາກໍເຮັດເພາະເຫັນແກ່ ພຣະເຈົ້າ ຫລືຖ້າເຮົາເຮັດຢ່າງຄົນປົກກະຕິ ກໍ
ເພາະເຫັນແກ່ເຈົ້າທັງຫລາຍ. [14]ດ້ວຍວ່າຄວາມຮັກຂອງ ພຣະຄຣິດ ຊົງບັງຄັບເຮົາຢູ່ ເພາະເຮົາ
ໄດ້ຄິດເຫັນຢ່າງນີ້ວ່າ ມີຜູ້ໜຶ່ງໄດ້ຕາຍແທນຄົນທັງປວງ ເຫດດັ່ງນັ້ນຄົນທັງປວງນັ້ນຈຶ່ງໄດ້ເຂົ້າ
ສ່ວນໃນຄວາມຕາຍນັ້ນ. [15]ແລະພຣະອົງນັ້ນໄດ້ຊົງວາຍພຣະຊົນແທນຄົນທັງປວງ ເພື່ອຄົນທັງ-
ຫລາຍຜູ້ທີ່ມີຊີວິດຢູ່ນັ້ນ ຈະບໍ່ໄດ້ມີຊີວິດເພື່ອປະໂຫຍດແກ່ຕົວເອງອີກຕໍ່ໄປ ແຕ່ຈະມີຊີວິດຢູ່ເພື່ອ
ພຣະອົງຜູ້ຊົງສິ້ນພຣະຊົນ ແລະໄດ້ຖືກຊົງບັນດານໃຫ້ຄືນພຣະຊົນເພາະເຫັນແກ່ເຂົາ. [16]ເຫດ
ສັນນັ້ນ, ແຕ່ນີ້ຕໍ່ໄປເຮົາຈະບໍ່ສັງເກດຮູ້ຜູ້ໃດຕາມມາດຕະຖານຂອງມະນຸດ ເຖິງແມ່ນເມື່ອກ່ອນ
ເຮົາໄດ້ສັງເກດຮູ້ ພຣະຄຣິດ ຕາມມາດຕະຖານຂອງມະນຸດກໍຕາມ ແຕ່ດຽວນີ້ເຮົາກໍບໍ່ສັງເກດຮູ້
ພຣະອົງຢ່າງນັ້ນອີກ. [17]ເຫດສັນນັ້ນຖ້າຜູ້ໃດຢູ່ໃນ ພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນ
ໃໝ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ, ກາຍເປັນສິ່ງໃໝ່ທັງນັ້ນ. [18]ສິ່ງທັງປວງ
ນີ້ເກີດມາຈາກ ພຣະເຈົ້າ ຜູ້ຊົງໂຜດໃຫ້ເຮົາຄືນດີກັນກັບພຣະອົງທາງ ພຣະຄຣິດ ແລະຊົງປະ-
ທານໃຫ້ເຮົາມີໜ້າທີ່ປະຕິບັດໃນການຄືນດີກັນນັ້ນ. [19]ຄື ພຣະເຈົ້າ ຜູ້ຊົງສະຖິດຢູ່ໃນອົງ ພຣະຄຣິດ

ໄດ້ຊົງກະທຳໃຫ້ມະນຸດຄືນດີກັນກັບພຣະອົງ[ກ] ບໍ່ໄດ້ຊົງຖືໂທດໃນການຜິດບາບຂອງເຂົາ ແລະ
ຊົງມອບຂ່າວເລື່ອງການທີ່ພຣະອົງໃຫ້ຄືນດີກັນນັ້ນໄວ້ກັບເຮົາ. [20]ເຫດສັນນັ້ນເຮົາຈຶ່ງເປັນທູດ
ຂອງພຣະຄຣິດ ໂດຍທີ່ພຣະເຈົ້າຊົງຂໍຮ້ອງເຈົ້າທັງຫລາຍທາງເຮົາ ເຮົາຈຶ່ງຂໍຮ້ອງພວກເຈົ້າໃນ
ນາມຂອງພຣະຄຣິດວ່າ, "ຈົ່ງຍອມໃຫ້ພຣະເຈົ້າຊົງກະທຳໃຫ້ເຈົ້າຄືນດີກັນກັບພຣະອົງເທີ້ນ."
[21]ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດ ຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບ
ຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທຳຂອງພຣະເຈົ້າໂດຍທາງ
ພຣະອົງ.

# ບົດທີ 6

[1]ໃນເມື່ອເປັນຄົນຮ່ວມງານກັບພຣະອົງ ເຮົາຈຶ່ງອ້ອນວອນຂໍເຈົ້າທັງຫລາຍວ່າ ທີ່ພວກເຈົ້າໄດ້
ຮັບພຣະຄຸນຂອງພຣະເຈົ້ານັ້ນ ຢ່າໃຫ້ເປັນການໄຮ້ປະໂຫຍດ. [2]ເພາະພຣະອົງຊົງກ່າວວ່າ, "ໃນ
ຄາວທີ່ກະລຸນາ ເຮົາໄດ້ຟັງເຈົ້າໃນວັນແຫ່ງຄວາມພົ້ນ ເຮົາໄດ້ສົງເຄາະເຈົ້າ"ບັດນີ້ແຫລະ, ຄື
ຄາວແຫ່ງພຣະກະລຸນາ ບັດນີ້ແຫລະ, ຄືວັນແຫ່ງຄວາມໂຜດໃຫ້ພົ້ນ. [3]ເຮົາບໍ່ໄດ້ໃຫ້ຜູ້ໃດມີເຫດ
ສະດຸດໃຈຈັກຢ່າງ ເພື່ອບໍ່ໃຫ້ການທີ່ເຮົາຮັບໃຊ້ປະຕິບັດນັ້ນເປັນທີ່ເຂົາຈະຕິຕຽນໄດ້. [4]ແຕ່ເຮົາຜູ້
ເປັນຄົນຮັບໃຊ້ຂອງພຣະເຈົ້າ ໄດ້ສະເໜີຕົວໃຫ້ເປັນທີ່ຊອບໃນການທັງປວງ ໂດຍຄວາມພຽນ
ອົດທົນຫລວງຫລາຍໃນຄວາມທຸກລຳບາກ, ໃນຄວາມຂັດສົນ, ໃນການບີບຄັ້ນ. [5]ໃນການຖືກ
ຂ້ຽນ, ໃນການຖືກຄຸກ, ໃນການວຸ້ນວາຍ, ໃນການງານຕ່າງໆ ໃນການອົດຫລັບອົດນອນ, ໃນ
ການອົດອາຫານ. [6]ໂດຍຄວາມບໍລິສຸດ, ໂດຍຄວາມຮູ້, ໂດຍຄວາມອົດທົນດົນນານ, ໂດຍໃຈ
ກະລຸນາ, ໂດຍພຣະວິນຍານບໍລິສຸດ, ໂດຍຄວາມຮັກອັນບໍ່ປອມ. [7]ໂດຍຖ້ອຍຄຳອັນສັດຈິງ,
ໂດຍລິດອຳນາດຂອງພຣະເຈົ້າ ໃຊ້ເຄື່ອງອາວຸດແຫ່ງຄວາມຊອບທຳດ້ວຍມືຂວາແລະມືຊ້າຍ.
[8]ທັງເວລາມີຍົດແລະເວລາອັບປະຍົດ, ທັງເວລາລືກັນວ່າບໍ່ດີແລະເວລາລືກັນວ່າດີ ຖືກເຂົາຫາ
ວ່າເປັນຄົນລໍ້ລວງ ແຕ່ຍັງເປັນຄົນສັດຊື່. [9]ຖືກເຂົາຫາວ່າເປັນຄົນບໍ່ມີໃຜຮູ້ຈັກ ແຕ່ຍັງເປັນຄົນທີ່
ເຂົາຮູ້ຈັກດີ, ເປັນຄົນທີ່ກຳລັງຈະຕາຍ ແຕ່ເບິ່ງແມ, ເຮົາຍັງເປັນຢູ່, ເປັນຄົນຖືກລົງໂທດ ແຕ່
ຍັງບໍ່ເຖິງຕາຍ. [10]ເປັນຄົນທີ່ມີຄວາມທຸກໂສກ ແຕ່ຍັງຊົມຊື່ນຍິນດີຢູ່ສະເໝີ, ເປັນຄົນທຸກຍາກ
ແຕ່ຍັງເຮັດໃຫ້ຫລາຍຄົນເກີດຮັ່ງມີ, ເປັນຄົນທີ່ບໍ່ມີສິ່ງໃດ ແຕ່ຍັງມີສິ່ງສາລະພັດ.
[11]ຊາວໂກຣິນໂທເອີຍ, ເຮົາກ່າວກັບເຈົ້າທັງຫລາຍໂດຍບໍ່ໄດ້ອັດບັງສິ່ງໃດໄວ້ ແລະໄດ້ແບ
ໃຈຂອງເຮົາອອກໃຫ້ເຈົ້າເຫັນ. [12]ເຮົາບໍ່ໄດ້ອັດບັງໃຈຂອງເຮົາໄວ້ຕໍ່ພວກເຈົ້າ ແຕ່ແມ່ນພວກເຈົ້າ
ໄດ້ອັດບັງໃຈໄວ້ຕໍ່ເຮົາ. [13]ເຮົາເວົ້າກັບເຈົ້າເໝືອນເວົ້າກັບລູກ ຈົ່ງເຮັດກັບເຮົາເໝືອນດັ່ງເຮົາເຮັດ
ກັບພວກເຈົ້າ ຄືຈົ່ງແບໃຈຂອງເຈົ້າທັງຫລາຍອອກໃຫ້ກວ້າງເທີ້ນ.

## ພວກເຮົາຄືວິຫານຂອງພຣະເຈົ້າຜູ້ຊົງພຣະຊົນຢູ່

[14]ຢ່າຜູກພັນ[ຂ] ກັບຄົນທີ່ບໍ່ເຊື່ອໃນຖານະທີ່ບໍ່ສະເໝີກັນ ເພາະວ່າຄວາມຊອບທຳຈະມີຫຸ້ນ

---

[ກ]ຫລືວ່າ "ຄືພຣະເຈົ້າຊົງໂຜດໃຫ້ມະນຸດຄືນດີກັນກັບພຣະອົງໂດຍພຣະຄຣິດ." [ຂ]ພາສາເດີມວ່າ "ຢ່າເຂົ້າທຽມແອກ."

ສ່ວນອັນໃດກັບຄວາມອະທຳ ແລະຄວາມສະຫວ່າງຈະເຂົ້າສະໜິດກັບຄວາມມືດໄດ້ຢ່າງໃດ.
15ພຣະຄຣິດກັບເບລີອານຈະລົງລອຍກັນໄດ້ຢ່າງໃດ ຫລືຄົນທີ່ເຊື່ອຈະມີສ່ວນອັນໃດກັບຄົນທີ່ບໍ່
ເຊື່ອ. 16ວິຫານຂອງພຣະເຈົ້າຈະຕົກລົງກັນກັບພຣະທຽມໄດ້ຢ່າງໃດ ດ້ວຍວ່າເຮົາທັງຫລາຍ
ເປັນວິຫານຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ດັ່ງທີ່ພຣະເຈົ້າໄດ້ຊົງກ່າວໄວ້ແລ້ວວ່າ, "ເຮົາຈະສະ-
ຖິດຢູ່ໃນເຂົາທັງຫລາຍແລະຈະທຽວຢູ່ໃນຖ້າມກາງເຂົາເຮົາຈະເປັນພຣະເຈົ້າຂອງເຂົາແລະພວກ
ເຂົາຈະເປັນໄພ່ພົນຂອງເຮົາ." 17ດ້ວຍເຫດນັ້ນອົງພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ, "ຈົ່ງອອກມາ
ຈາກຖ້າມກາງພວກເຂົາເຫລົ່ານັ້ນແລະຈົ່ງຢູ່ຕ່າງຫາກ ຢ່າຖືກຕ້ອງສິ່ງທີ່ຖ່ອຍຮ້າຍແລ້ວຝ່າຍເຮົາ,
ຈຶ່ງຈະຮັບເຈົ້າທັງຫລາຍໄວ້. 18ເຮົາຈະເປັນບິດາຂອງພວກເຈົ້າແລະຝ່າຍເຈົ້າ, ຈະເປັນບຸດຊາຍ
ບຸດຍິງຂອງເຮົາ"ອົງພຣະຜູ້ເປັນເຈົ້າຜູ້ຊົງລິດທານຸພາບສູງສຸດໄດ້ຊົງກ່າວໄວ້ດັ່ງນັ້ນ.

# ບົດທີ 7

1ພວກທີ່ຮັກເອີຍ, ເມື່ອພວກເຮົາມີພຣະສັນຍາດັ່ງນັ້ນແລ້ວ ໃຫ້ເຮົາທັງຫລາຍຊຳລະຕົວຈາກ
ຮອຍເປື້ອນທຸກຢ່າງຂອງເນື້ອກາຍແລະວິນຍານຈິດ ແລະຈົ່ງເຮັດໃຫ້ມີຄວາມບໍລິສຸດຢ່າງຄົບ
ຖ້ວນໂດຍຄວາມຢຳເກງພຣະເຈົ້າ.

## ໂປໂລຍິນດີທີ່ຄຣິສຕະຈັກກັບໃຈໃໝ່

2ຈົ່ງມີໃຈກວ້າງຕ້ອນຮັບເຮົາເທີ້ນ ເຮົາບໍ່ໄດ້ເຮັດຮ້າຍແກ່ຜູ້ໃດ, ບໍ່ໄດ້ທຳລາຍຜູ້ໃດ, ຫລືບໍ່ໄດ້
ເອົາປຽບຜູ້ໃດຈັກເທື່ອ. 3ເຮົາກ່າວຢ່າງນີ້ກໍບໍ່ແມ່ນເພື່ອຈະໃສ່ໂທດພວກເຈົ້າ ເພາະເຮົາໄດ້ບອກ
ແລ້ວວ່າ ເຈົ້າທັງຫລາຍຢູ່ໃນໃຈຂອງເຮົາ ຄືຈະຕາຍຫລືຈະເປັນກໍຢູ່ດ້ວຍກັນ.

4ເຮົາມີຄວາມໄວ້ໃຈແລະພາກພູມໃຈໃນພວກເຈົ້າຢ່າງຫລວງຫລາຍ ເຮົາໄດ້ຮັບຄວາມຊູໃຈ
ຢ່າງບໍລິບູນ ແລະໃນຄວາມທຸກລຳບາກຂອງເຮົາທຸກຢ່າງ ເຮົາກໍຍັງມີຄວາມຊົມຊື່ນຍິນດີຢ່າງລົ້ນ
ເຫລືອ. 5ເພາະເຖິງແມ່ນວ່າເຮົາໄດ້ມາເຖິງແຂວງມາເກໂດເນຍແລ້ວ ຮ່າງກາຍຂອງເຮົາກໍບໍ່ໄດ້
ພັກຜ່ອນຈັກຍາມ ແຕ່ເຮົາມີຄວາມທຸກລຳບາກຢູ່ອ້ອມຂ້າງ ພາຍນອກມີການຕໍ່ສູ້ພາຍໃນກໍມີ
ຄວາມຢ້ານ. 6ແຕ່ເຖິງປານນັ້ນ, ພຣະເຈົ້າຜູ້ຊົງໂຜດໜູນໃຈຄົນທີ່ທໍ້ຖອຍ ໄດ້ຊົງໂຜດໜູນໃຈ
ເຮົາດ້ວຍການທີ່ຕີໂຕໄດ້ມາເຖິງນັ້ນ. 7ແລະບໍ່ໃຊ່ແຕ່ພຽງການມາຂອງຕີໂຕເທົ່ານັ້ນ ແຕ່ດ້ວຍ
ການທີ່ພວກເຈົ້າໄດ້ຊູໃຈຂອງຕີໂຕອີກດ້ວຍ ຕາມທີ່ຕີໂຕໄດ້ມາເລົ່າໃຫ້ຟັງເຖິງຄວາມອາໄລແລະ
ຄວາມໂສກເສົ້າຂອງເຈົ້າທັງຫລາຍ ກັບທັງໃຈຮ້ອນຮົນຂອງພວກເຈົ້າທີ່ມີຕໍ່ເຮົາ ຈຶ່ງເຮັດໃຫ້ເຮົາ
ມີຄວາມຊົມຊື່ນຍິນດີທະວີຂຶ້ນ. 8ເພາະເຖິງແມ່ນຈົດໝາຍຂອງເຮົາສະບັບນັ້ນໄດ້ເຮັດໃຫ້ເຈົ້າທັງ-
ຫລາຍທຸກໃຈກໍຕາມ ເຮົາກໍບໍ່ກິນແໜງ ເຖິງແມ່ນວ່າເຮົາໄດ້ກິນແໜງແດ່ແລ້ວກໍຕາມ ເພາະເຮົາ
ເຫັນວ່າຈົດໝາຍສະບັບນັ້ນໄດ້ເຮັດໃຫ້ເຈົ້າທັງຫລາຍທຸກໃຈ ກໍພຽງແຕ່ຊົ່ວຄາວດຽວເທົ່ານັ້ນ.
9ບັດນີ້ເຮົາມີຄວາມຊົມຊື່ນຍິນດີບໍ່ໃຊ່ເພາະຄວາມທຸກໃຈຂອງເຈົ້າທັງຫລາຍ ແຕ່ເພາະຄວາມທຸກ
ໃຈນັ້ນເປັນເຫດໃຫ້ພວກເຈົ້າກັບໃຈເສຍໃໝ່ ເພາະວ່າພວກເຈົ້າໄດ້ຮັບຄວາມທຸກໃຈຢ່າງທີ່ຊອບ
ພຣະໄທພຣະເຈົ້າ ຈຶ່ງບໍ່ໄດ້ຮັບຜົນຮ້າຍຈາກເຮົາຈັກຢ່າງ. 10ດ້ວຍວ່າຄວາມທຸກໃຈຕາມຢ່າງ
ຊອບພຣະໄທພຣະເຈົ້ານັ້ນ ຍ່ອມເຮັດໃຫ້ກັບໃຈເສຍໃໝ່ ຊຶ່ງນຳໄປສູ່ຄວາມພົ້ນໂດຍບໍ່ຄວນກິນ-

ແໜງ ແຕ່ຄວາມທຸກໃຈຕາມຢ່າງໂລກນັ້ນ ຍ່ອມນຳໄປເຖິງຄວາມຕາຍ. [11]ຈົ່ງພິຈາລະນາເບິ່ງ
ວ່າ ການທີ່ເຈົ້າທັງຫລາຍໄດ້ທຸກໃຈຕາມຢ່າງຊອບພຣະໄທພຣະເຈົ້ານັ້ນ ໄດ້ເຮັດໃຫ້ພວກເຈົ້າ
ເກີດມີຄວາມຂະຫຍັນຂັນແຂງຫລາຍເທົ່າໃດ, ເອົາໃຈໃສ່ທີ່ຈະແກ້ຕົວຫລາຍເທົ່າໃດ, ຄວາມ
ເຄືອງໃຈ, ຄວາມຕື່ນຕົວ, ຄວາມອາໄລ, ຄວາມຮ້ອນຮົນ ແລະການລົງໂທດຕອບແທນຫລາຍ
ເທົ່າໃດ ໃນທຸກສິ່ງເຫລົ່ານີ້ເຈົ້າທັງຫລາຍໄດ້ສະແດງຕົວວ່າເປັນຄົນບໍ່ມີຜິດໃນການນັ້ນແລ້ວ.
[12]ເຫດສັນນັ້ນເຖິງແມ່ນວ່າເຮົາໄດ້ຂຽນມາເຖິງເຈົ້າທັງຫລາຍ ກໍບໍ່ໃຊ່ຍ້ອນຜູ້ທີ່ໄດ້ເຮັດຜິດຫລື
ຍ້ອນຜູ້ທີ່ຖືກຜິດນັ້ນ ແຕ່ເພື່ອຄວາມຂະຫຍັນຂັນແຂງທີ່ພວກເຈົ້າມີຕໍ່ເຮົານັ້ນ ຈະໄດ້ປະກົດແກ່
ເຈົ້າທັງຫລາຍຊ້ອງພຣະພັກພຣະເຈົ້າ. [13]ໂດຍເຫດນັ້ນແຫລະ, ເຮົາຈຶ່ງມີຄວາມຊູໃຈ. ນອກ-
ຈາກຄວາມຊູໃຈຂອງເຮົານັ້ນ ເຮົາມີຄວາມຊົມຊື່ນຍິນດີຢ່າງເຫລືອລົ້ນເພາະຍ້ອນຄວາມຍິນດີ
ຂອງຕີໂຕ ໃນການທີ່ພວກເຈົ້າໄດ້ເຮັດໃຫ້ຈິດໃຈຂອງຕີໂຕສະຫງົບລົງ. [14]ທີ່ເຮົາໄດ້ອວດອ້າງ
ເລື່ອງເຈົ້າທັງຫລາຍແກ່ຕີໂຕ ເຮົາບໍ່ມີຄວາມລະອາຍເລີຍ ທຸກສິ່ງທີ່ເຮົາກ່າວແກ່ພວກເຈົ້າເປັນ-
ຄວາມຈິງສັນໃດ ສິ່ງທີ່ເຮົາອວດອ້າງເລື່ອງພວກເຈົ້າແກ່ຕີໂຕເມື່ອກ່ອນນັ້ນ ກໍປະກົດເປັນຄວາມ
ຈິງເໝືອນກັນສັນນັ້ນ. [15]ແລະເມື່ອຕີໂຕລະນຶກເຖິງການເຊື່ອຟັງຂອງເຈົ້າທັງຫລາຍ ແລະການ
ທີ່ພວກເຈົ້າໄດ້ຕ້ອນຮັບເພິ່ນດ້ວຍຄວາມຢຳເກງຈົນຕົວສັ່ນ ເພິ່ນກໍເພີ່ມຄວາມຮັກໃນພວກເຈົ້າ
ຫລາຍຂຶ້ນ. [16]ເຮົາຊົມຊື່ນຍິນດີເພາະວ່າເຮົາເຊື່ອໝັ້ນພວກເຈົ້າໄດ້ທຸກສິ່ງ.

# ບົດທີ 8

## ການໃຫ້ທານແບບຄຣິສະຕຽນ

[1]ພີ່ນ້ອງທັງຫລາຍເອີຍ, ເຮົາປາດຖະໜາໃຫ້ເຈົ້າທັງຫລາຍຮູ້ຈັກເຖິງພຣະຄຸນຂອງພຣະເຈົ້າ
ຊຶ່ງພຣະອົງຊົງໂຜດປະທານແກ່ຄຣິສຕະຈັກທັງຫລາຍໃນແຂວງມາເກໂດເນຍ. [2]ເພາະວ່າເມື່ອ
ຄາວທີ່ເຂົາຖືກທົດລອງຢ່າງໜັກ ໂດຍໄດ້ຮັບຄວາມທຸກລຳບາກ ຄວາມຍິນດີອັນເຫລືອລົ້ນ
ແລະຄວາມຍາກຈົນອັນເຫລືອປະມານຂອງເຂົານັ້ນ ກໍໄດ້ປະກົດລົ້ນອອກມາເປັນໃຈສັດທາອັນ
ກວ້າງຂວາງ. [3]ເພາະເຮົາເປັນພະຍານໄດ້ວ່າ ເຂົາສັດທາຖວາຍໂດຍສຸດຄວາມສາມາດຂອງເຂົາ
ແລະເຫລືອຄວາມສາມາດຂອງເຂົາເສຍອີກ. [4]ແລ້ວຕາມລຳພັງໃຈຂອງເຂົາເອງ ເຂົາກໍຍັງໄດ້
ອ້ອນວອນຢ່າງຫລວງຫລາຍ ຂໍເຮົາກະລຸນາໃຫ້ເຂົາມີສ່ວນໃນການຊ່ອຍເຫລືອພວກໄພ່ພົນຂອງ
ພຣະເຈົ້າ. [5]ບໍ່ເໝືອນດັ່ງເຮົາໄດ້ຄາດໝາຍໄວ້ ແຕ່ຂໍ້ສຳຄັນທີ່ສຸດແມ່ນເຂົາໄດ້ຖວາຍຕົວເອງແກ່
ອົງພຣະຜູ້ເປັນເຈົ້າກ່ອນ ແລ້ວໄດ້ມອບຕົວໃຫ້ເຮົາຕາມນ້ຳພຣະໄທຂອງພຣະເຈົ້າ. [6]ຈົນວ່າເຮົາ
ໄດ້ເຕືອນຕີໂຕໃຫ້ຊ່ອຍພວກເຈົ້າເຮັດການກຸສົນນັ້ນໃຫ້ສຳເລັດ ຕາມທີ່ຕົນໄດ້ລົງມືເຮັດໄວ້ກ່ອນ
ແລ້ວນັ້ນ. [7]ເຫດສັນນັ້ນເມື່ອເຈົ້າທັງຫລາຍມີບໍລິບູນໃນທຸກສິ່ງ ຄື ຄວາມເຊື່ອ, ຖ້ອຍຄຳ, ວິຊາ
ຄວາມຮູ້, ຄວາມຂະຫຍັນຂັນແຂງ, ແລະຄວາມຮັກຕໍ່ເຮົາ ເຈົ້າທັງຫລາຍກໍຈົ່ງປະກອບການກຸ-
ສົນນີ້ຢ່າງບໍລິບູນເໝືອນກັນ. [8]ເຮົາກ່າວດັ່ງນີ້ບໍ່ແມ່ນຄຳບັນຊາ ແຕ່ໄດ້ນຳເລື່ອງຄວາມຂະຫຍັນ
ຂັນແຂງຂອງຄົນອື່ນມາຫຽບທົດລອງກັບຄວາມຮັກຂອງເຈົ້າທັງຫລາຍນັ້ນ ເບິ່ງວ່າເປັນຂອງແທ້
ຫລືບໍ່. [9]ເພາະວ່າເຈົ້າທັງຫລາຍຮູ້ຈັກພຣະຄຸນຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາແລ້ວວ່າ

ເຖິງ ແມ່ນພຣະອົງຊົງຮັ່ງມີ ພຣະອົງກໍຍັງຊົງຍອມກາຍເປັນຄົນຍາກຈົນ ເພາະ ເຫັນແກ່ເຈົ້າທັງ-
ຫລາຍ ເພື່ອເຈົ້າທັງຫລາຍຈະໄດ້ກາຍເປັນຄົນຮັ່ງມີ ເນື່ອງຈາກຄວາມຍາກຈົນຂອງພຣະອົງ.
[10]ແລະເຮົາຈະອອກຄວາມເຫັນໃນເລື່ອງນີ້ວ່າ ເລື່ອງທີ່ພວກເຈົ້າໄດ້ຕັ້ງຕົ້ນກ່ອນເຂົາເມື່ອປີກາຍນີ້
ແລະບໍ່ແມ່ນພວກເຈົ້າໄດ້ຕັ້ງຕົ້ນຈະເຮັດເທົ່ານັ້ນ ແຕ່ວ່າຍັງເຕັມໃຈໃນການເຮັດນັ້ນດ້ວຍ. [11]ບັດ
ນີ້ກໍຄວນແລ້ວທີ່ເຈົ້າທັງຫລາຍຈະເຮັດການນັ້ນໃຫ້ສຳເລັດເສຍ ເພື່ອວ່າເມື່ອພວກເຈົ້າມີໃຈພ້ອມ
ຢູ່ແລ້ວ ເຈົ້າກໍຈະເຮັດໃຫ້ສຳເລັດຕາມຄວາມສາມາດຂອງຕົນ. [12]ເພາະວ່າຖ້າມີນ້ຳໃຈພ້ອມຢູ່
ແລ້ວ ພຣະເຈົ້າກໍຊົງພໍພຣະໄທທີ່ຈະຊົງຮັບຕາມທີ່ທຸກຄົນມີຢູ່ ບໍ່ໃຊ່ຕາມທີ່ເຂົາບໍ່ມີ. [13]ເຮົາບໍ່ໄດ້
ມຸ້ງໝາຍວ່າຈະໃຫ້ການງານຂອງຄົນອື່ນເບົາລົງ ແລະໃຫ້ການງານຂອງພວກເຈົ້າໜັກຂຶ້ນ ແຕ່
ເພື່ອໃຫ້ເປັນການສະເໝີກັນ. [14]ສັນນັ້ນໃນຍາມທີ່ເຈົ້າທັງຫລາຍມີບໍລິບູນຢ່າງເວລານີ້ ພວກເຈົ້າ
ກໍຄວນຈະຊ່ອຍຄົນເຫລົ່ານັ້ນທີ່ຂາດເຂີນ ແລະໃນຍາມທີ່ເຂົາມີບໍລິບູນ ເຂົາກໍຈະຊ່ອຍພວກເຈົ້າ
ເມື່ອຂາດເຂີນເໝືອນກັນ ເພື່ອຈະໃຫ້ສະເໝີກັນໄປ. [15]ດັ່ງມີຄຳຂຽນໄວ້ໃນພຣະຄຳພີແລ້ວວ່າ,
"ຜູ້ທີ່ໄດ້ຫລາຍກໍບໍ່ເຫລືອແລະຜູ້ທີ່ໄດ້ໜ້ອຍກໍບໍ່ຂາດເຂີນ."

[16]ແຕ່ຈົ່ງຂອບພຣະຄຸນ ພຣະເຈົ້າ ຜູ້ຊົງບັນດານໃຫ້ຕີໂຕມີໃຈຂະຫຍັນຂັນແຂງເພື່ອເຈົ້າທັງ-
ຫລາຍຢ່າງດຽວກັນ. [17]ເພາະບໍ່ພຽງແຕ່ເພິ່ນໄດ້ຮັບຄວາມເຕືອນຂອງເຮົາເທົ່ານັ້ນ ແຕ່ເພິ່ນຍັງມີ-
ໃຈຂະຫຍັນຂັນແຂງພ້ອມຢູ່ແລ້ວ ຈຶ່ງໄດ້ໄປຫາເຈົ້າທັງຫລາຍຕາມລຳພັງໃຈຕົນເອງ. [18]ເຮົາໄດ້
ໃຊ້ພີ່ນ້ອງຄົນນັ້ນ ຜູ້ມີຊື່ສຽງໃນຄຣິສຕະຈັກທັງຫລາຍເພາະການປະກາດຂ່າວປະເສີດ ໃຫ້ໄປນຳ
ຕີໂຕ. [19]ແລະບໍ່ພຽງແຕ່ເທົ່ານັ້ນ ແຕ່ຄຣິສຕະຈັກໄດ້ເລືອກຕັ້ງຜູ້ນັ້ນໃຫ້ເປັນເພື່ອນເດີນທາງດ້ວຍ
ກັນກັບເຮົາໃນການກຸສົນ ຊຶ່ງເຮົາໄດ້ຮັບເປັນທຸລະ ເພື່ອໃຫ້ເປັນທີ່ຖວາຍພຣະກຽດແກ່ອົງພຣະ-
ຜູ້ເປັນເຈົ້າ ແລະເປັນທີ່ສະແດງນ້ຳໃຈອັນພ້ອມແລ້ວຂອງເຮົາ. [20]ເຮົາກໍຈັດການຢ່າງນີ້ເພື່ອບໍ່ໃຫ້
ຜູ້ໜຶ່ງຜູ້ໃດຕິຕຽນເຮົາໄດ້ ໃນເລື່ອງຂອງບໍລິຈາກອັນບໍລິບູນຊຶ່ງເຮົາໄດ້ຮັບແຈກນັ້ນ. [21]ດ້ວຍວ່າ
ເຮົາມຸ້ງໝາຍຢາກເປັນຄົນສັດຊື່ ບໍ່ໃຊ່ແຕ່ຈຳເພາະພຣະພັກອົງ ພຣະຜູ້ເປັນເຈົ້າ ເທົ່ານັ້ນ ແຕ່ຕໍ່-
ໜ້າຄົນທັງປວງດ້ວຍ. [22]ເຮົາໄດ້ໃຊ້ພີ່ນ້ອງຂອງເຮົານັ້ນໄປນຳເຂົາ ຄືຜູ້ທີ່ເຮົາໄດ້ທົດລອງເບິ່ງ
ຫລາຍເທື່ອ ຈຶ່ງເຫັນວ່າເປັນຄົນມີໃຈຂະຫຍັນຂັນແຂງໃນຫລາຍສິ່ງຫລາຍຢ່າງມາແລ້ວ ແລະ
ບັດນີ້ໄດ້ມີຄວາມຂະຫຍັນຂັນແຂງຫລາຍກວ່າເກົ່າ ຍ້ອນວ່າເພິ່ນມີຄວາມໄວ້ໃຈຫລາຍໃນພວກ
ເຈົ້າ. [23]ສ່ວນ ຕີໂຕ ນັ້ນເປັນຜູ້ເຂົ້າສ່ວນກັບເຮົາ ແລະເປັນຜູ້ຮ່ວມງານໃນການຮັບໃຊ້ເຈົ້າທັງ-
ຫລາຍສ່ວນພວກພີ່ນ້ອງຂອງ ເຮົານັ້ນກໍ ເປັນທູດຮັບໃຊ້ຂອງຄຣິສຕະຈັກທັງຫລາຍ ແລະ ເປັນ
ພຣະກຽດຕິຍົດຂອງ ພຣະຄຣິດ. [24]ເຫດສັນນັ້ນ ຈົ່ງສະແດງຫລັກຖານຄວາມຮັກຂອງ ເຈົ້າທັງ-
ຫລາຍ ແລະການທີ່ເຮົາອວດອ້າງກ່ຽວກັບເລື່ອງພວກເຈົ້ານັ້ນ ຈົ່ງໃຫ້ປະກົດແກ່ເຂົາເຫລົ່ານັ້ນຕໍ່-
ໜ້າຄຣິສຕະຈັກທັງຫລາຍ.

# ບົດທີ 9

## ການສົງເຄາະພວກໄພ່ພົນຂອງພຣະເຈົ້າ

[1]ເຮົາບໍ່ຈຳເປັນຕ້ອງຂຽນເຖິງເຈົ້າທັງຫລາຍ ກ່ຽວເລື່ອງການສົງເຄາະພວກໄພ່ພົນຂອງ ພຣະ-

ເຈົ້າ. [2]ເພາະເຮົາຮູ້ວ່າໃຈຂອງພວກເຈົ້າພ້ອມຢູ່ແລ້ວ ເຮົາຈຶ່ງກ່າວອວດອ້າງເລື່ອງຂອງພວກເຈົ້າ
ຕໍ່ຊາວ ມາເກໂດເນຍ ວ່າ ທີ່ແຂວງ ອະຂາຢາ ເຂົາກໍຈັດແຈງໄວ້ພ້ອມແລ້ວຕັ້ງແຕ່ປີກາຍ ແລະໃຈ-
ຮ້ອນຮົນຂອງເຈົ້າທັງຫລາຍກໍຊຸກຍູ້ຫລາຍຄົນໃຫ້ເຂົາສົນໃຈ. [3]ແຕ່ເຮົາໄດ້ໃຫ້ພວກພີ່ນ້ອງເຫລົ່າ-
ນັ້ນໄປ ເພື່ອບໍ່ໃຫ້ການອວດອ້າງຂອງເຮົາກ່ຽວເລື່ອງຂອງພວກເຈົ້າໃນຂໍ້ນັ້ນເປັນການເສຍປະ-
ໂຫຍດ ແລະເພື່ອໃຫ້ເຈົ້າທັງຫລາຍຈັດແຈງໄວ້ພ້ອມ ເໝືອນດັ່ງເຮົາໄດ້ກ່າວແລ້ວນັ້ນ. [4]ບໍ່ດັ່ງນັ້ນ
ແລ້ວ, ຖ້າຊາວ ມາເກໂດເນຍ ບາງຄົນມາກັບເຮົາ ແລະເຫັນວ່າເຈົ້າທັງຫລາຍບໍ່ໄດ້ຈັດແຈງໄວ້
ພ້ອມຕາມທີ່ເຮົາໄດ້ຕາຍໃຈເຊື່ອນັ້ນ ຢ່າວ່າແຕ່ພວກເຈົ້າຈະຖືກລະອາຍຂາຍໜ້າ ແຕ່ເຮົາເອງກໍ
ຈະຖືກລະອາຍຂາຍໜ້າເໝືອນກັນ. [5]ເຫດສັນນັ້ນເຮົາຈຶ່ງຄຶດເຫັນວ່າຈຳເປັນຕ້ອງຕັກເຕືອນພີ່-
ນ້ອງເຫລົ່ານັ້ນ ໃຫ້ໄປຫາເຈົ້າທັງຫລາຍກ່ອນເຮົາ ແລະໃຫ້ຈັດແຈງເຄື່ອງທານຂອງເຈົ້າທັງ-
ຫລາຍໄວ້ຕາມທີ່ໄດ້ສັນຍາໄວ້ແລ້ວ ເພື່ອເຄື່ອງທານນັ້ນຈະມີຢູ່ພ້ອມ ເໝືອນເປັນເຄື່ອງທານທີ່
ໃຫ້ດ້ວຍໃຈສັດທາ ບໍ່ໃຊ່ດ້ວຍຂືນໃຈ. [6]ດັ່ງນີ້ແຫລະ, ຄົນທີ່ຫວ່ານພຽງເລັກນ້ອຍ ກໍກ່ຽວເກັບໄດ້
ພຽງເລັກນ້ອຍ ແລະຄົນທີ່ຫວ່ານຫລາຍ ກໍກ່ຽວເກັບໄດ້ຫລາຍ. [7]ທຸກຄົນຈົ່ງໃຫ້ຕາມທີ່ຕົນໄດ້ຄຶດ
ໝາຍໄວ້ໃນໃຈ ບໍ່ໃຊ່ໃຫ້ດ້ວຍຄຶດເສຍດາຍ ຫລືດ້ວຍຂືນໃຈໃຫ້ ເຫດວ່າ ພຣະເຈົ້າ ຊົງຮັກຄົນນັ້ນ
ທີ່ໃຫ້ດ້ວຍຊື່ນໃຈຍິນດີ. [8]ແລະ ພຣະເຈົ້າ ຊົງລິດອາດປະທານພຣະຄຸນອັນອຸດົມທຸກຢ່າງແກ່ເຈົ້າ
ທັງຫລາຍ ເພື່ອໃຫ້ພວກເຈົ້າມີທຸກສິ່ງທຸກຢ່າງພຽງພໍສຳລັບຕົວສະເໝີ ທັງຈະມີສິ່ງຂອງບໍລິບູນ
ສຳລັບການງານດີທຸກຢ່າງດ້ວຍ. [9]ຕາມທີ່ມີຂຽນໄວ້ໃນພຣະຄຳພີວ່າ, "ເພິ່ນບໍລິຈາກຢ່າງກວ້າງ-
ຂວາງ ໃຫ້ແກ່ຄົນທຸກຍາກຄຸນຄວາມດີຂອງເພິ່ນກໍຕັ້ງຢູ່ເປັນນິດ." [10]ຝ່າຍພຣະອົງຜູ້ຊົງປະທານ
ແນວປູກໃຫ້ແກ່ຜູ້ຫວ່ານ, ກັບທັງອາຫານສຳລັບກິນ ຈະຊົງປະທານ ແນວປູກໃຫ້ແກ່ເຈົ້າທັງ-
ຫລາຍ, ທັງຈະຊົງບັນດານໃຫ້ແນວປູກນັ້ນທະວີຂຶ້ນ ຊ້ຳຈະຊົງບັນດານໃຫ້ຜົນແຫ່ງຄຸນຄວາມດີ
ຂອງພວກເຈົ້ານັ້ນຈະເລີນຂຶ້ນ. [11]ໂດຍຊົງໂຜດໃຫ້ເຈົ້າທັງຫລາຍຮັ່ງມີດ້ວຍສິ່ງຂອງຢ່າງບໍລິບູນ
ເພື່ອໃຫ້ພວກເຈົ້າມີຂອງແຈກຢາຍຢ່າງໃຈກວ້າງຂວາງ ຊຶ່ງເຮົາໄດ້ນຳໄປແຈກຢາຍ ຈຶ່ງເປັນ
ເຫດໃຫ້ເກີດການຂອບພຣະຄຸນຕໍ່ ພຣະເຈົ້າ. [12]ເພາະວ່າການຮັບໃຊ້ໃນການບົວລະບັດນັ້ນບໍ່ໃຊ່
ເປັນການຊ່ອຍພວກໄພ່ພົນຂອງພຣະອົງທີ່ຂາດເຂີນເທົ່ານັ້ນ ແຕ່ຍັງເປັນເຫດໃຫ້ມີການຂອບ
ພຣະຄຸນ ພຣະເຈົ້າ ຢ່າງຫລວງຫລາຍອີກດ້ວຍ. [13]ແລະເນື່ອງຈາກຜົນແຫ່ງການບົວລະບັດນັ້ນ
ເຂົາຈຶ່ງສັນລະເສີນ ພຣະເຈົ້າ ໂດຍເຫດທີ່ເຈົ້າທັງຫລາຍຍອມຟັງແລະຕັ້ງໃຈຢູ່ໃນອຳນາດຂອງ
ຂ່າວປະເສີດເລື່ອງ ພຣະຄຣິດ ແລະເພາະເຫດພວກເຈົ້າໄດ້ແຈກຈ່າຍແກ່ເຂົາ ແລະແກ່ຄົນທັງ
ປວງດ້ວຍໃຈກວ້າງຂວາງ. [14]ຝ່າຍເຂົາກໍຈະຮັກແພງແລະອ້ອນວອນເພື່ອເຈົ້າທັງຫລາຍ ເພາະ
ເຫດພຣະຄຸນຂອງ ພຣະເຈົ້າ ທີ່ສະຖິດຢູ່ໃນພວກເຈົ້າຢ່າງລົ້ນເຫລືອ. [15]ຈົ່ງຂອບພຣະຄຸນ ພຣະ-
ເຈົ້າ ເພາະຂອງພຣະລາຊະທານອັນເຫລືອທີ່ຈະພັນລະນາໃຫ້ສິ້ນສຸດໄດ້.

# ບົດທີ 10

## ໂປໂລກ່າວຕໍ່ຕ້ານເລື່ອງການປະຕິບັດຂອງຄົນ

[1]ເຮົາຄື ໂປໂລ, ຂໍອ້ອນວອນເຈົ້າທັງຫລາຍເປັນສ່ວນຕົວ ໂດຍເຫັນແກ່ຄວາມອ່ອນສຸພາບ

ແລະພຣະໄທກະລຸນາຂອງ ພຣະຄຣິດ ເຮົາ, ຜູ້ຊຶ່ງພວກເຈົ້າວ່າເປັນຄົນສຸພາບຖ່ອມຕົວເມື່ອຢູ່ຕໍ່-
ໜ້າ ແຕ່ເມື່ອຢູ່ໄກກໍເປັນຄົນໃຈກ້າ. 2ຄື ເຮົາຂໍຮ້ອງພວກເຈົ້າວ່າ ເມື່ອເຮົາມາຢູ່ນຳພວກເຈົ້າ ຢ່າ
ໃຫ້ເຮົາສະແດງຄວາມກ້າຫານດ້ວຍຄວາມແນ່ໃຈ ເໝືອນເຮົາຄຶດບັງອາດຈະເຮັດຕໍ່ບາງຄົນທີ່ນຶກ
ເຫັນວ່າ ເຮົາຍັງເຮັດໄປຕາມທຳມະດາມະນຸດ. 3ເພາະເຖິງແມ່ນວ່າເຮົາຢູ່ກິນໃນໂລກກໍຈິງ ເຮົາ
ກໍບໍ່ໄດ້ສູ້ຮົບຕາມທຳມະດາມະນຸດ. 4ເພາະວ່າເຄື່ອງອາວຸດຂອງເຮົາບໍ່ເປັນຝ່າຍໂລກ ແຕ່ມີລິດ
ອຳນາດຈາກ ພຣະເຈົ້າ ອາດທຳລາຍຄ້າຍອັນເຂັ້ມແຂງໄດ້ ຄືທຳລາຍຄວາມຄຶດທີ່ມີເຫດຜົນອັນ
ບໍ່ຈິງ. 5ແລະຄວາມດື້ດຶງທຸກປະການທີ່ຕັ້ງຕົວຂຶ້ນຂັດຂວາງຄວາມຮູ້ຈັກ ພຣະເຈົ້າ ແລະປາບ
ຄວາມຄຶດທຸກປະການລົງໃຫ້ຢູ່ໃຕ້ບັງຄັບ ຈົນເຖິງນ້ອມຟັງ ພຣະຄຣິດ. 6ແລະເມື່ອການນ້ອມຟັງ
ຂອງເຈົ້າທັງຫລາຍສຳເລັດຄົບຖ້ວນແລ້ວ ເຮົາພ້ອມທີ່ຈະລົງໂທດແກ່ການບໍ່ນ້ອມຟັງທຸກປະ-
ການ. 7ເຈົ້າທັງຫລາຍຈົ່ງແລເບິ່ງສິ່ງທີ່ປະກົດກັບຕາ[ກ] ຖ້າຜູ້ໃດຕາຍໃຈເຊື່ອວ່າຕົນເປັນຄົນຂອງ
ພຣະຄຣິດ ກໍໃຫ້ຜູ້ນັ້ນຄຳນຶງວ່າເໝືອນດັ່ງຕົນເປັນຄົນຂອງ ພຣະຄຣິດ ເຮົາກໍເປັນຄົນຂອງ
ພຣະຄຣິດ ເໝືອນກັນ. 8ເຖິງແມ່ນວ່າເຮົາໄດ້ອວດອ້າງຫລາຍໄປໜ້ອຍໜຶ່ງ ກ່ຽວກັບອຳນາດທີ່
ອົງ ພຣະຜູ້ເປັນເຈົ້າ ຊົງປະທານໃຫ້ໄວ້ ເພື່ອສ້າງພວກເຈົ້າຂຶ້ນ ບໍ່ໃຊ່ເພື່ອທຳລາຍພວກເຈົ້າ ກໍຈະ
ບໍ່ລະອາຍ. 9ເຮົາເວົ້າດັ່ງນັ້ນເພື່ອບໍ່ໃຫ້ເຈົ້າທັງຫລາຍຄຶດວ່າ ເຮົາຢາກໃຫ້ພວກເຈົ້າຢ້ານເພາະ
ຈົດໝາຍຂອງເຮົາ ເພາະມີບາງຄົນເວົ້າວ່າ. 10“ຈົດໝາຍຂອງໂປໂລນັ້ນມີນ້ຳໜັກແລະມີອຳນາດ
ກໍຈິງ ແຕ່ວ່າຕົວເພິ່ນເບິ່ງຄືອ່ອນແຮງ ແລະຖ້ອຍຄຳຂອງເພິ່ນກໍໃຊ້ການບໍ່ໄດ້.” 11ຈົ່ງໃຫ້ຄົນ
ເຫລົ່ານັ້ນເຂົ້າໃຈດັ່ງນີ້ວ່າ ເມື່ອເຮົາບໍ່ຢູ່ ເຮົາເວົ້າໄວ້ໃນຈົດໝາຍຂອງເຮົາຢ່າງໃດ ເມື່ອເຮົາມາ
ແລ້ວ ເຮົາກໍຈະເຮັດຢ່າງນັ້ນ.

12ເພາະວ່າເຮົາບໍ່ກ້ານັບຕົວວ່າສະເໝີກັນກັບບາງຄົນທີ່ຍົກຕົວເອງ ຫລືປຽບທຽບກັນກັບເຂົາ
ດ້ວຍວ່າເມື່ອເຂົາເອົາຕົວຂອງເຂົາເປັນເຄື່ອງວັດແທກ ແລະແທກທຽບກັນແລະກັນແລ້ວ ເຂົາກໍ
ເປັນຄົນຂາດສະຕິປັນຍາ. 13ຝ່າຍເຮົາຈະບໍ່ອວດຕົວໃນສິ່ງໃດເກີນຂອບເຂດ ແຕ່ວ່າຈະອວດຕົວ
ໃນຂອບເຂດທີ່ ພຣະເຈົ້າ ໄດ້ຊົງຈັດໄວ້ໃຫ້ເຮົາ ແລະພວກເຈົ້າກໍຢູ່ໃນຂອບເຂດນັ້ນ. 14ການທີ່ເຮົາ
ມາເຖິງເຈົ້າທັງຫລາຍນັ້ນ ບໍ່ໃຊ່ເປັນການລ່ວງເກີນຂອບເຂດອັນຄວນ ເພາະເຮົາເປັນຜູ້ທີ່ນຳ
ຂ່າວປະເສີດເລື່ອງ ພຣະຄຣິດ ມາເຖິງພວກເຈົ້າກ່ອນໝູ່. 15ເຮົາບໍ່ໄດ້ອວດຕົວເກີນຂອບເຂດ, ບໍ່
ໄດ້ເອົາການທີ່ຄົນອື່ນເຮັດມາອວດ ແຕ່ເຮົາຫວັງໃຈວ່າ ເພື່ອຄວາມເຊື່ອຂອງພວກເຈົ້າຈະເລີນ
ຂຶ້ນແລ້ວ ງານຂອງເຮົາຈະຂະຫຍາຍເຂດອອກໄປຢ່າງກວ້າງຂວາງຖ້າມກາງພວກເຈົ້າ ໃນ
ຂອບເຂດຂອງເຮົາ. 16ເພື່ອເຮົາຈະໄດ້ປະກາດເລື່ອງຂ່າວປະເສີດໃນເຂດທີ່ຢູ່ນອກທ້ອງຖິ່ນຂອງ
ພວກເຈົ້າ ໂດຍບໍ່ໄດ້ອວດເລື່ອງການງານທີ່ຄົນອື່ນໄດ້ເຮັດໄວ້ແລ້ວນັ້ນ. 17“ຖ້າຜູ້ໃດຈະອວດ ກໍ
ຈົ່ງເອົາອົງ ພຣະຜູ້ເປັນເຈົ້າ ມາອວດເທີນ.” 18ເພາະຄົນທີ່ຍົກຍ້ອງຕົວເອງບໍ່ເປັນທີ່ນັບຖືຂອງຜູ້ໃດ
ແຕ່ຄົນທີ່ໜ້ານັບຖືນັ້ນ ຄືຜູ້ທີ່ພຣະອົງເຈົ້າຊົງຍົກຍ້ອງ.

[ກ]ຫລືວ່າ “ພວກເຈົ້າກຳລັງແລເບິ່ງອັນທີ່ປາກົດພາຍນອກ.”

# ບົດທີ 11

## ໂປໂລແລະອັກຄະສາວົກທຽມ

1ເຮົາປະສົງຢາກໃຫ້ເຈົ້າທັງຫລາຍອົດທົນຟັງຄວາມໂງ່ຂອງເຮົາຈັກໜ້ອຍ. 2ກະລຸນາອົດທົນ
ນຳເຮົາແດ່ທ້ອນ ເພາະວ່າເຮົາຫວງແຫນເຈົ້າທັງຫລາຍຕາມຢ່າງຄວາມຫວງແຫນຂອງພຣະເຈົ້າ
ເຫດວ່າເຮົາໄດ້ໝາຍໝັ້ນພວກເຈົ້າໄວ້ສຳລັບຜົວຜູ້ດຽວ ເພື່ອຈະຖວາຍແກ່ພຣະຄຣິດເປັນສາວ
ປອດບໍລິສຸດ. 3ແຕ່ເໝືອນດັ່ງງູນັ້ນໄດ້ຫລອກລວງນາງເອວາດ້ວຍກົນອຸບາຍຂອງມັນ ເຮົາຄຶດ
ຢ້ານວ່າຈິດໃຈຂອງເຈົ້າທັງຫລາຍກໍຈະຖືກຫລອກລວງດ້ວຍຢ່າງໃດຢ່າງໜຶ່ງ ໃຫ້ຫລົງຈາກ
ຄວາມຈິງຮັກພັກດີອັນສັດຊື່ແລະບໍລິສຸດຕໍ່ພຣະຄຣິດດັ່ງນັ້ນ. 4ເຫດວ່າຖ້າມີຜູ້ໃດມາປະກາດ
ເລື່ອງພຣະເຢຊູອົງອື່ນ ທີ່ແຕກຕ່າງກັບພຣະອົງທີ່ເຮົາໄດ້ປະກາດແລ້ວນັ້ນ ຫລືຖ້າເຈົ້າທັງ-
ຫລາຍຈະຮັບພຣະວິນຍານ ຊຶ່ງຕ່າງກັນກັບທີ່ພວກເຈົ້າໄດ້ຮັບແລ້ວນັ້ນ ຫລືຮັບຂ່າວປະເສີດທີ່
ແຕກຕ່າງກັບທີ່ພວກເຈົ້າໄດ້ຮັບເອົາແລ້ວນັ້ນກໍເທົ່າກັບວ່າເຈົ້າທັງຫລາຍໄດ້ຍອມເຊື່ອຟັງເຂົາງ່າຍ
ເຕັມທີ. 5ເພາະເຮົາຄຶດວ່າເຮົາບໍ່ເປັນຜູ້ຕ່ຳຕ້ອຍກວ່າພວກອັກຄະສາວົກຊັ້ນຜູ້ໃຫຍ່ເຫລົ່ານັ້ນແມ່ນ
ແຕ່ໜ້ອຍດຽວ. 6ເຖິງແມ່ນເຮົາບໍ່ເກັ່ງຝ່າຍຄວາມເວົ້າກໍດີ ເຮົາກໍຍັງມີຄວາມຮູ້ ທີ່ຈິງ, ເຮົາໄດ້
ສະແດງຂໍ້ນີ້ໃຫ້ປະກົດຢ່າງແຈ່ມແຈ້ງແກ່ເຈົ້າທັງຫລາຍແລ້ວໃນກິດຈະການທຸກສິ່ງ. 7ເຮົາໄດ້ເຮັດ
ຜິດຫລືໃນການທີ່ເຮົາຖ່ອມໃຈລົງເພື່ອຍົກຊູເຈົ້າທັງຫລາຍຂຶ້ນ ເພາະເຮົາໄດ້ປະກາດເລື່ອງຂ່າວ
ປະເສີດຂອງພຣະເຈົ້າແກ່ພວກເຈົ້າ ໂດຍບໍ່ໄດ້ຄຶດຄ່າອັນໃດ. 8ເຮົາໄດ້ລູ່ຊິງຄຣິສຕະຈັກໜ່ວຍ
ອື່ນ ດ້ວຍການຮັບເງິນບຳລຸງຈາກພວກເຂົາເພື່ອມາບົວລະບັດພວກເຈົ້າ. 9ແລະເມື່ອເຮົາຢູ່ນຳ
ເຈົ້າທັງຫລາຍແລະກຳລັງຂາດເຂີນ ເຮົາກໍບໍ່ໄດ້ໃຫ້ເປັນພາລະອັນໜັກແກ່ຜູ້ໃດ ເພາະວ່າພວກ
ພີ່ນ້ອງທີ່ມາຈາກແຂວງມາເກໂດເນຍ ໄດ້ຊ່ອຍໃຫ້ມີພໍກັບຄວາມຕ້ອງການຂອງເຮົາ ເຮົາໄດ້
ລະວັງຕົວບໍ່ໃຫ້ເປັນພາລະອັນໜັກແກ່ເຈົ້າທັງຫລາຍໃນສິ່ງໃດ ແລະຈະລະວັງຢ່າງນັ້ນຕໍ່ໄປ.
10ຄວາມຈິງຂອງພຣະຄຣິດມີຢູ່ໃນເຮົາຢ່າງຄັກແນ່ສັນໃດ ຈຶ່ງບໍ່ມີຜູ້ໃດໃນແຂວງອະຂາຍາຫ້າມ
ເຮົາບໍ່ໃຫ້ອວດອ້າງໃນການນີ້ສັນນັ້ນ. 11ເພາະເຫດໃດ ເພາະເຮົາບໍ່ຮັກເຈົ້າທັງຫລາຍຫລື ພຣະ-
ເຈົ້າຊົງຊາບດີວ່າເຮົາຮັກພວກເຈົ້າ. 12ສິ່ງໃດທີ່ເຮົາເຮັດຢູ່ນັ້ນ ເຮົາກໍຈະເຮັດຕໍ່ໄປ ເພື່ອບໍ່ໃຫ້ຄົນ
ເຫລົ່ານັ້ນມີໂອກາດອວດໄດ້ວ່າ ການງານທີ່ເຂົາເຮັດນັ້ນເປັນການແບບດຽວກັນກັບເຮົາ.
13ເພາະວ່າຄົນຢ່າງນັ້ນເປັນອັກຄະສາວົກທຽມ, ເປັນຄົນງານທີ່ຫລອກລວງ, ທີ່ປອມຕົວເປັນອັກ
ຄະສາວົກຂອງພຣະຄຣິດ. 14ການເຮັດຢ່າງນັ້ນບໍ່ເປັນການປະຫລາດຫຍັງດອກ ເພາະຊາຕານ
ເອງກໍຍັງປອມຕົວເປັນເທວະດາຂອງຄວາມສະຫວ່າງໄດ້. 15ເຫດສັນນັ້ນຈຶ່ງບໍ່ເປັນການງຶດປະ-
ຫລາດອັນໃດ ທີ່ຜູ້ຮັບໃຊ້ຂອງຊາຕານຈະປອມຕົວເປັນຜູ້ຮັບໃຊ້ຂອງຄວາມຊອບທຳ ບັ້ນສຸດ
ທ້າຍຂອງຄົນເຫລົ່ານັ້ນຈະເປັນໄປຕາມກິດຈະການຂອງເຂົາ.

## ການທົນທຸກຂອງໂປໂລໃນຖານະອັກຄະສາວົກ

16ເຮົາກ່າວຊ້ຳອີກວ່າ ຢ່າໃຫ້ຜູ້ໃດຖືວ່າເຮົາເປັນຄົນໂງ່ ແຕ່ຖ້າມີດັ່ງນັ້ນຈົ່ງອົດຮັບຟັງເຮົາ
ເໝືອນຟັງຄົນໂງ່ ເພື່ອເຮົາຈະໄດ້ອວດອ້າງຈັກໜ້ອຍ. 17(ການທີ່ເຮົາກ່າວຢ່າງນັ້ນ ເຮົາບໍ່ໄດ້
ກ່າວຕາມຫລັກຂອງອົງພຣະຜູ້ເປັນເຈົ້າ ແຕ່ກ່າວເໝືອນຄົນໂງ່ທີ່ມີຄວາມໄວ້ໃຈໃນການອວດ

ຂອງຕົນ. [18]ເພາະວ່າມີຫລາຍຄົນອວດຕົວຕາມຢ່າງມະນຸດ ເຮົາກໍຈະອວດເໝືອນກັນ).
[19]ເພາະວ່າການທີ່ເຈົ້າທັງຫລາຍຍິນດີອົດຮັບຟັງຄົນໂງ່ນັ້ນ ຄົງຈະເປັນເພາະພວກເຈົ້າເປັນຜູ້ສະ-
ຫລາດແລ້ວຕີ້. [20]ເພາະພວກເຈົ້າຍອມທົນເອົາ ເມື່ອມີຜູ້ໃດເອົາເຈົ້າໄປເປັນຂ້ອຍ, ເມື່ອມີຜູ້ໃດ
ກືນກິນເຈົ້າ, ເມື່ອມີຜູ້ໃດຈັບເອົາຕົວເຈົ້າ, ເມື່ອມີຜູ້ໃດຍົກຕົວເປັນໃຫຍ່, ຫລືເມື່ອມີຜູ້ໃດຕົບໜ້າ
ເຈົ້າ. [21]ເຮົາກ່າວດ້ວຍຄວາມລະອາຍວ່າເຮົາເປັນຄົນອ່ອນແອເກີນໄປໃນເລື່ອງນີ້ບໍ່ວ່າໃຜຈະກ້າ
ອວດໃນເລື່ອງໃດ (ເຮົາກ່າວຢ່າງຄົນໂງ່) ເຮົາກໍກ້າອວດໃນເລື່ອງນັ້ນເໝືອນກັນ. [22]ເຂົາເປັນ
ຊາດເຮັບເຣີຫລື ເຮົາກໍເປັນເໝືອນກັນ ເຂົາເປັນຊາດອິສຣາເອນຫລື ເຮົາກໍເປັນເໝືອນກັນ
ເຂົາເປັນເຊື້ອສາຍຂອງອັບຣາຮາມຫລື ເຮົາກໍເປັນເໝືອນກັນ. [23]ເຂົາເປັນຜູ້ຮັບໃຊ້ຂອງພຣະ-
ຄຣິດຫລື (ເຮົາເວົ້າຕາມຢ່າງຄົນເສຍຈິດ) ເຮົາກໍລື່ນກວ່າເຂົາອີກ ເຮົາໄດ້ເຮັດການໜັກລື່ນກວ່າ
ເຂົາ, ໄດ້ຖືກຄຸກຫລາຍກວ່າເຂົາ ໃນການຖືກຂ້ຽນຖືກຕີ ເຮົາກໍຖືກເກີນຂະໜາດ ໃນການຜະ-
ເຊີນໄພ ເຮົາເກືອບຕາຍຫລາຍເທື່ອແລ້ວ. [24]ພວກຢິວໄດ້ຂ້ຽນເຮົາຫ້າເທື່ອ ເທື່ອລະສາມສິບເກົ້າ
ບາດ. [25]ເຮົາໄດ້ຖືກຂ້ຽນດ້ວຍແສ້ຫວາຍສາມເທື່ອ, ເຂົາໄດ້ຄວ່າງກ້ອນຫີນໃສ່ເຮົາເທື່ອໜຶ່ງ,
ເຮົາໄດ້ຖືກສະເພົາຫລົ້ມເຖິງສາມເທື່ອ, ເຮົາໄດ້ຢູ່ໃນທະເລເລິກວັນໜຶ່ງກັບຄືນໜຶ່ງ. [26]ເຮົາໄດ້
ເດີນທາງຫລາຍເທື່ອ ເປັນການປະຈົນໄພອັນໜ້າຢ້ານໃນແມ່ນໍ້າ, ຈາກພວກໂຈນ, ຈາກເພື່ອນ
ຮ່ວມຊາດຂອງເຮົາເອງ, ຈາກພວກນອກຊາດ, ໃນບ້ານເມືອງ, ໃນປ່າ, ໃນທະເລ, ຖ້າມກາງ
ພວກພີ່ນ້ອງທີ່ບໍ່ສັດຊື່. [27]ຜະເຊີນໃນການໜັກໜ່ວງແລະຍາກລຳບາກ ໃນການອົດຫລັບອົດ
ນອນຫລາຍຄືນ, ໃນການອຶດເຂົ້າຢາກນໍ້າ, ໃນການອົດອາຫານຫລາຍເທື່ອ, ໃນການຖືກໜາວ
ແລະເປືອຍຕົວ. [28]ແລະນອກຈາກການອື່ນໆ ທີ່ເຮົາຍັງບໍ່ໄດ້ຍົກມາໃຫ້ຟັງ ກໍຍັງມີພາລະປະຈຳ
ວັນຂອງເຮົາ ຄືຄວາມຫ່ວງໃຍເຖິງຄຣິສຕະຈັກທັງປວງ. [29]ມີໃຜແດ່ທີ່ອ່ອນແຮງ ແລະເຮົາບໍ່ໄດ້
ອ່ອນແຮງນຳ ມີໃຜແດ່ທີ່ຖືກສະດຸດໃຈ ແລະເຮົາບໍ່ໄດ້ຮ້ອນຮົນໃຈດ້ວຍ. [30]ຖ້າເຮົາຈຳເປັນຕ້ອງ
ອວດຕົວກ່ຽວກັບຄວາມອ່ອນແຮງຂອງເຮົາ. [31]ພຣະອົງຜູ້ຊົງເປັນພຣະເຈົ້າແລະຊົງເປັນພຣະບິ-
ດາຂອງພຣະເຢຊູເຈົ້າ ພຣະອົງຊົງເປັນຜູ້ທີ່ຄວນແກ່ການສັນລະເສີນເປັນນິດ ພຣະອົງກໍຊົງຮູ້
ວ່າເຮົາບໍ່ໄດ້ເວົ້າຕົວະ. [32]ຜູ້ວ່າລາຊະການເມືອງຂອງກະສັດອາເຣຕາໃນນະຄອນດາມາເຊ ໄດ້
ໃຫ້ທະຫານເຝົ້ານະຄອນໄວ້ເພື່ອຈະຈັບຕົວເຮົາ. [33]ແຕ່ເຂົາໄດ້ເອົາເຮົາໃສ່ກວຍໃຫຍ່ຢ່ອນລົງ
ທາງປ່ອງຢ້ຽມໃນກຳແພງນະຄອນ ເຮົາຈຶ່ງພົ້ນຈາກເງື້ອມມືຂອງທ່ານ.

# ບົດທີ 12

## ນິມິດແລະການຊົງສະແດງທີ່ໂປໂລໄດ້ຮັບຈາກພຣະເຈົ້າ

[1]ເຖິງຈະບໍ່ມີປະໂຫຍດອັນໃດກໍຕາມ ເຮົາກໍຈຳເປັນຕ້ອງອວດຕົວ ແຕ່ເຮົາຈະເລົ່າເຖິງນິມິດ
ແລະການສະແດງຊຶ່ງມາຈາກອົງພຣະຜູ້ເປັນເຈົ້າ. [2]ແຕ່ສິບສີ່ປີມາແລ້ວເຮົາຮູ້ຈັກຄຣິສະຕຽນຜູ້
ໜຶ່ງ ຜູ້ນັ້ນໄດ້ຖືກຮັບຂຶ້ນໄປເຖິງສະຫວັນຊັ້ນທີສາມ (ແຕ່ຈະໄປທັງກາຍຫລືນອກກາຍເຮົາກໍບໍ່ຮູ້
ພຣະເຈົ້າເທົ່ານັ້ນເປັນຜູ້ຊົງຊາບ). [3]ເຮົາຮູ້ຈັກວ່າຄົນນັ້ນໄດ້ຮັບຂຶ້ນໄປເຖິງທີ່ສຸຂະເສີມ (ແຕ່ຈະ
ໄປທັງກາຍຫລືນອກກາຍເຮົາກໍບໍ່ຮູ້ ພຣະເຈົ້າເທົ່ານັ້ນເປັນຜູ້ຊົງຊາບ). [4]ຄົນນັ້ນໄດ້ຍິນສຽງທີ່ຈະ

ກ່າວອອກເປັນຄຳບໍ່ໄດ້ແລະເປັນສິ່ງທີ່ຫ້າມມະນຸດບໍ່ໃຫ້ເປີດເຜີຍ. [5]ສຳລັບຄົນຜູ້ນັ້ນແຫລະ, ເຮົາ
ອວດໄດ້ ແຕ່ສຳລັບເຮົາເອງຈະບໍ່ອວດຕົວ ເວັ້ນແຕ່ຈະອວດໃນຄວາມອ່ອນແຮງຂອງເຮົາ.
[6]ເພາະເຖິງແມ່ນວ່າເຮົາຢາກອວດຕົວ ເຮົາກໍບໍ່ເປັນຄົນໂງ່ ເພາະເຮົາກ່າວຕາມຄວາມຈິງ ແຕ່
ເຮົາອົດກັ້ນໄວ້ ກໍເພາະຢ້ານວ່າຈະມີບາງຄົນຍົກຍ້ອງເຮົາ ເກີນກວ່າທີ່ເຂົາໄດ້ຮູ້ຈັກການເຫັນ
ແລະຟັງເຮົານັ້ນ. [7]ແລະເພື່ອບໍ່ໃຫ້ເຮົາຍົກຍ້ອງຕົວຈົນເກີນໄປເນື່ອງຈາກການຊົງສະແດງອັນ
ຫລວງຫລາຍຊຶ່ງມາຈາກ**ພຣະເຈົ້າ** **ພຣະເຈົ້າ**ໄດ້ຊົງບັນດານໃຫ້ມີສ້ຽນໜາມໃນເນື້ອກາຍຂອງ
ເຮົາ ເປັນບໍລິວານຂອງຊາຕານທີ່ທຸບຕີເຮົາ ເພື່ອບໍ່ໃຫ້ເຮົາຍົກຍ້ອງຕົວຈົນເກີນໄປ. [8]ເລື່ອງສິ່ງ
ນັ້ນເຮົາໄດ້ອ້ອນວອນທູນຂໍອົງ**ພຣະຜູ້ເປັນເຈົ້າ**ເຖິງສາມເທື່ອ ໃຫ້ມັນພົ້ນໄປຈາກເຮົາ. [9]ແຕ່
ພຣະອົງຊົງກ່າວແກ່ເຮົາວ່າ, "ການທີ່ເຈົ້າມີຄຸນຈາກເຮົາ ກໍພໍສຳລັບເຈົ້າແລ້ວ ດ້ວຍວ່າຄວາມ
ອ່ອນແອມີຢູ່ທີ່ໃດ ເດດຂອງເຮົາກໍມີລິດຂຶ້ນເຕັມຂະໜາດຢູ່ທີ່ນັ້ນ" ເຫດສັນນັ້ນເຮົາຈຶ່ງມີຄວາມ
ພາກພູມໃຈໃນບັນດາຄວາມອ່ອນແອຂອງເຮົາດີກວ່າ ເພື່ອລິດເດດຂອງ**ພຣະຄຣິດ**ຈະໄດ້ບັງຮົ່ມ
ເຮົາໄວ້. [10]ສັນນັ້ນເພາະເຫັນແກ່**ພຣະຄຣິດ**ເຮົາຈຶ່ງຊື່ນໃຈໃນບັນດາຄວາມອ່ອນແອ, ໃນການ
ຖືກໝິ່ນປະໝາດ, ໃນຄວາມຍາກລຳບາກ, ໃນການຖືກຂົ່ມເຫງ, ແລະໃນຄວາມຍາກຈົນ
ເພາະວ່າເຮົາອ່ອນແອເມື່ອໃດ ເຮົາກໍຈະແຂງແຮງເມື່ອນັ້ນ.

## ຄວາມຫ່ວງໃຍຂອງໂປໂລເຖິງຄຣິສຕະຈັກໂກຣິນໂທ

[11]ເຮົາກາຍເປັນຄົນໂງ່ແລ້ວ ເຈົ້າທັງຫລາຍໄດ້ບັງຄັບເຮົາໃຫ້ເປັນ ເພາະວ່າສົມຄວນແລ້ວທີ່
ພວກເຈົ້າຈະຍ້ອງຍໍເຮົາ ເຖິງແມ່ນວ່າເຮົາບໍ່ເປັນຜູ້ດີວິເສດກໍຈິງ ເຮົາກໍບໍ່ຕ່ຳຕ້ອຍກວ່າອັກຄະສາ-
ວົກຊັ້ນຜູ້ໃຫຍ່ເຫລົ່ານັ້ນໃນປະການໜຶ່ງປະການໃດ. [12]ແທ້ຈິງ, ລັກສະນະຂອງອັກຄະສາວົກໄດ້
ປະກົດຢ່າງແຈ່ມແຈ້ງໃນທ່າມກາງພວກເຈົ້າ ໂດຍຄວາມພຽນ, ໂດຍການສຳຄັນ, ໂດຍການ
ອັດສະຈັນ, ແລະໂດຍການອິດທິລິດ. [13]ເພາະວ່າເຈົ້າທັງຫລາຍເສຍປຽບຕໍ່ຄຣິສຕະຈັກອື່ນໆ
ໃນຂໍ້ໃດແດ່ ເວັ້ນໄວ້ແຕ່ໃນຂໍ້ນີ້ ຄືເຮົາບໍ່ໄດ້ເປັນພາລະອັນໜັກແກ່ພວກເຈົ້າ ການຜິດນັ້ນຂໍ
**ພຣະເຈົ້າ**ຊົງໃຫ້ອະໄພໂທດແກ່ເຮົາແດ່ທ້ອນ. [14]ນີ້ແຫລະ, ເປັນເທື່ອທີສາມທີ່ເຮົາຈັດຕຽມພ້ອມ
ທີ່ຈະມາຫາເຈົ້າທັງຫລາຍ ແລະເຮົາຈະບໍ່ເປັນພາລະອັນໜັກແກ່ພວກເຈົ້າ ເພາະວ່າເຮົາບໍ່ຕ້ອງ-
ການສິ່ງໃດຈາກພວກເຈົ້າ ແຕ່ວ່າຕ້ອງການຕົວພວກເຈົ້າ ເຫດວ່າທີ່ລູກຈະທ້ອນໂຮມຊັບໄວ້ສຳ-
ລັບພໍ່ແມ່ກໍບໍ່ສົມຄວນ ແຕ່ວ່າແມ່ນພໍ່ແມ່ເປັນຜູ້ທ້ອນໂຮມຊັບໄວ້ສຳລັບລູກ. [15]ຝ່າຍເຮົາກໍມີຄວາມ
ຍິນດີທີ່ຈະສະຫລະຊັບແລະເຫື່ອແຮງທັງໝົດເພື່ອເຈົ້າທັງຫລາຍ ເມື່ອເຮົາຮັກພວກເຈົ້າຫລາຍ
ຂຶ້ນເຖິງພຽງນີ້ ພວກເຈົ້າຈະກັບຮັກເຮົາໜ້ອຍລົງຫລື. [16]ບາງທີເຈົ້າທັງຫລາຍຈະຍອມຮັບວ່າເຮົາ
ບໍ່ໄດ້ເປັນພາລະອັນໜັກແກ່ພວກເຈົ້າແຕ່ພວກເຈົ້າຄົງກ່າວວ່າເຮົາໃຊ້ເລ້ຫລ່ຽມຜິກຈັບພວກເຈົ້າ
ດ້ວຍກົນອຸບາຍ. [17]ເຮົາໄດ້ໂກງເອົາປະໂຫຍດອັນໃດຈາກພວກເຈົ້າແດ່ຫລື ໃນການທີ່ເຮົາໄດ້ໃຊ້
ຄົນເຫລົ່ານັ້ນໄປຫາພວກເຈົ້າ. [18]ເຮົາໄດ້ວອນຂໍໃຫ້ຕີໂຕໄປແລະໃຊ້ໃຫ້ນ້ອງນັ້ນໄປດ້ວຍ ຕີໂຕ
ໄດ້ໂກງເອົາປະໂຫຍດອັນໃດຈາກພວກເຈົ້າແດ່ ເຮົາທັງສອງບໍ່ໄດ້ດຳເນີນການດ້ວຍນ້ຳໃຈອັນ
ດຽວກັນຫລື, ເຮົາບໍ່ໄດ້ທຽວໃນຮ່ອງຮອຍອັນດຽວກັນບໍຫລື. [19]ເຈົ້າທັງຫລາຍຄົງຄຶດຢູ່ຕະຫລອດ
ມາວ່າເຮົາກ່າວແກ້ຕົວຕໍ່ພວກເຈົ້າ ທີ່ຈິງ, ເຮົາກ່າວໃນ**ພຣະຄຣິດ**ເໝືອນເຮົາຢູ່ຕໍ່ພຣະພັກ**ພຣະ-**

ເຈົ້າ ແລະພີ່ນ້ອງທີ່ຮັກຂອງເຮົາເອີຍ, ສິ່ງສາລະພັດທີ່ເຮົາໄດ້ເຮັດນັ້ນ ເຮົາເຮັດເພື່ອເຈົ້າທັງ-
ຫລາຍຈະເລີນຂຶ້ນ. [20]ເພາະເຮົາຄຶດຢ້ານວ່າເມື່ອເຮົາມາເຖິງແລ້ວ ເຮົາອາດຈະບໍ່ເຫັນພວກເຈົ້າ
ເໝືອນຢ່າງທີ່ເຮົາຢາກເຫັນ ແລະພວກເຈົ້າຈະບໍ່ເຫັນເຮົາເໝືອນຢ່າງທີ່ພວກເຈົ້າຢາກເຫັນ ຄື
ຢ້ານວ່າບໍ່ເຫດໃດກໍເຫດໜຶ່ງ ຈະມີການຜິດຖຽງກັນ, ການອິດສາກັນ, ການຄຽດກັນ, ການຄຶດ
ໃຫຍ່ໄຝ່ສູງຕໍ່ກັນ, ການນິນທາກັນ, ການຊູບໆ ຊິບໆ ສໍ່ສຽດກັນ, ການຂີ້ອົ່ງຈອງຫອງ, ແລະ
ການເກາະກະອຸ້ນວາຍກັນ. [21]ເຮົາຢ້ານວ່າເມື່ອເຮົາກັບມາເຖິງແລ້ວ ພຣະເຈົ້າຂອງເຮົາຈະຊົງ
ບັນດານໃຫ້ເຮົາຖ່ອມລົງລະອາຍໃຈຕໍ່ໜ້າເຈົ້າທັງຫລາຍ ແລະເຮົາຈະທຸກໂສກເພາະເຫດທີ່
ຫລາຍຄົນໄດ້ເຮັດຜິດບາບມາແຕ່ກ່ອນແລ້ວ, ບໍ່ໄດ້ກັບໃຈຈາກການຊົ່ວຮ້າຍ, ການຫລິ້ນຊູ້,
ແລະການໂລພະຕັນຫາທີ່ເຂົາໄດ້ເຮັດນັ້ນ.

# ບົດທີ 13

[1]ເທື່ອນີ້ເປັນເທື່ອທີສາມທີ່ເຮົາຈະມາຫາພວກເຈົ້າ “ຂໍ້ກ່າວຫາອັນໃດຕ້ອງມີພະຍານສອງຫລື
ສາມປາກ ຈຶ່ງຈະເປັນທີ່ເຊື່ອຖືໄດ້.” [2]ເຮົາໄດ້ເຕືອນເຈົ້າທັງຫລາຍທີ່ເຮັດຜິດບາບມາແຕ່ກ່ອນ
ແລະບັນດາຄົນອື່ນໆ ນັ້ນດ້ວຍ ແລະບັດນີ້ເມື່ອເຮົາບໍ່ຢູ່, ເຮົາຂໍຕັກເຕືອນພວກເຈົ້າອີກ ເໝືອນ
ເມື່ອເຮົາໄດ້ຢູ່ກັບພວກເຈົ້າເທື່ອທີສອງນັ້ນວ່າ ຖ້າເຮົາມາອີກເຮົາຈະບໍ່ຜ່ອນໂທດໃຫ້ຄົນເຫລົ່າ-
ນັ້ນ. [3]ເພາະວ່າເຈົ້າທັງຫລາຍຕ້ອງການຈະເຫັນຫລັກຖານວ່າ ພຣະຄຣິດຊົງກ່າວທາງເຮົາ
ພຣະອົງບໍ່ໄດ້ຊົງອ່ອນແອຕໍ່ພວກເຈົ້າ ແຕ່ຊົງມີລິດອຳນາດໃນທ່າມກາງພວກເຈົ້າ. [4]ເພາະເຖິງ
ແມ່ນວ່າພຣະອົງຊົງຖືກຄຶງໄວ້ເນື່ອງຈາກຊົງອ່ອນແອກໍຈິງ ພຣະອົງກໍຍັງຊົງພຣະຊົນຢູ່ເພາະລິດ
ອຳນາດຂອງພຣະເຈົ້າ ເພາະວ່າເຮົາກໍອ່ອນແອດ້ວຍກັນກັບພຣະອົງ ແຕ່ເພື່ອພວກເຈົ້າເຮົາກໍມີ
ຊີວິດເປັນຢູ່ດ້ວຍກັນກັບພຣະອົງ ເພາະລິດອຳນາດຂອງພຣະເຈົ້າ. [5]ຈົ່ງພິຈາລະນາເບິ່ງຕົນເອງ
ວ່າ ພວກເຈົ້າຕັ້ງຢູ່ໃນຄວາມເຊື່ອຫລືບໍ່ ຈົ່ງຊັນນະສູດຕົນເອງສາ ເຈົ້າທັງຫລາຍບໍ່ຮູ້ຫລືວ່າ
ພຣະເຢຊູຄຣິດຊົງສະຖິດຢູ່ໃນພວກເຈົ້າ ເວັ້ນເສຍແຕ່ພວກເຈົ້າຈະຜ່ານການຊັນນະສູດນັ້ນບໍ່ໄດ້.
[6]ແຕ່ເຮົາຫວັງໃຈວ່າເຈົ້າທັງຫລາຍຄົງຮູ້ວ່າເຮົາບໍ່ໄດ້ເປັນຜູ້ຜ່ານການຊັນນະສູດບໍ່ໄດ້. [7]ເຮົາອ້ອນ-
ວອນຕໍ່ພຣະເຈົ້າເພື່ອບໍ່ໃຫ້ເຈົ້າທັງຫລາຍເຮັດຊົ່ວປະການໃດ ບໍ່ໃຊ່ແຕ່ເພື່ອຈະໃຫ້ປະກົດວ່າເຮົາ
ເປັນຜູ້ທີ່ຜ່ານການຊັນນະສູດໄດ້ ແຕ່ເພື່ອເຈົ້າທັງຫລາຍຈະເປັນຄົນທີ່ເຮັດເໝາະສົມ ເຖິງແມ່ນ
ເຮົາຈະເປັນເໝືອນຄົນທີ່ຜ່ານການຊັນນະສູດບໍ່ໄດ້ກໍຕາມ. [8]ເພາະວ່າເຮົາຈະເຮັດສິ່ງໃດຂັດກັບ
ຄວາມຈິງກໍບໍ່ໄດ້ ໄດ້ແຕ່ເຮັດເພື່ອຄວາມຈິງເທົ່ານັ້ນ. [9]ເພາະວ່າເມື່ອເຮົາອ່ອນແອແລະເຈົ້າທັງ-
ຫລາຍເຂັ້ມແຂງນັ້ນ ເຮົາກໍຍິນດີ ເຮົາຈຶ່ງອ້ອນວອນຂໍສິ່ງນີ້ ຄືຂໍໃຫ້ເຈົ້າທັງຫລາຍຈະເລີນຂຶ້ນ
ຢ່າງດີທີ່ສຸດ. [10]ເຮົາຈຶ່ງຂຽນຂໍ້ຄວາມທັງຫລາຍນີ້ເມື່ອເຮົາບໍ່ຢູ່ນຳ ກໍເພື່ອເວລາເຮົາຢູ່ນຳແລ້ວ
ເຮົາຈະບໍ່ໄດ້ກ່າວຄຳເຄັ່ງຄັດໃນການໃຊ້ອຳນາດ ທີ່ອົງພຣະຜູ້ເປັນເຈົ້າໄດ້ຊົງມອບໃຫ້ແກ່ເຮົາ
ເພື່ອສ້າງພວກເຈົ້າຂຶ້ນ ບໍ່ໃຊ່ເພື່ອມ້າງເພລົງ.

[11]ໃນສຸດທ້າຍນີ້ພີ່ນ້ອງທັງຫລາຍເອີຍ, ເຮົາຂໍລາພວກເຈົ້າກ່ອນ ຈົ່ງປັບປຸງໃຫ້ຕົວຈະເລີນຂຶ້ນ,
ຈົ່ງຟັງຄຳວອນຂໍຂອງເຮົາ, ຈົ່ງເປັນນ້ຳໜຶ່ງໃຈດຽວກັນ, ຈົ່ງຢູ່ຮ່ວມກັນດ້ວຍຄວາມສະຫງົບ ແລະ

ພຣະເຈົ້າຜູ້ຊົງຮັກແລະປະທານສັນຕິສຸກ ຈະຊົງສະຖິດຢູ່ນຳເຈົ້າທັງຫລາຍ. 12ຈົ່ງທັກທາຍປາ
ໄສດ້ວຍທຳນຽມຈູບອັນບໍລິສຸດ. 13ໄພ່ພົນທັງປວງຂອງ ພຣະເຈົ້າກໍຝາກຄວາມຄຶດເຖິງມາຍັງເຈົ້າ
ທັງຫລາຍ. 14ຂໍໃຫ້ພຣະຄຸນຂອງ ພຣະເຢຊູຄຣິດ ເຈົ້າ, ຄວາມຮັກຂອງ ພຣະເຈົ້າ, ແລະຄວາມ
ຮ່ວມໃຈແຫ່ງ ພຣະວິນຍານບໍລິສຸດ ຈົ່ງສະຖິດຢູ່ນຳເຈົ້າທັງຫລາຍທຸກຄົນເທີນ.

* * *

# ຈົດໝາຍຂອງໂປໂລ ເຖິງຄຣິສຕະຈັກໃນແຂວງ ຄາລາເຕຍ

## ບົດທີ 1

[1]ໂປໂລ ຜູ້ເປັນອັກຄະສາວົກ (ບໍ່ແມ່ນມະນຸດແຕ່ງຕັ້ງ ຫລືມະນຸດເປັນຕົວແທນແຕ່ງຕັ້ງ ແຕ່
ວ່າ ພຣະເຢຊູຄຣິດ ແລະ ພຣະບິດາ ເຈົ້າຜູ້ຊົງບັນດານໃຫ້ ພຣະເຢຊູຄຣິດ ຄືນພຣະຊົນໄດ້ຊົງແຕ່ງ-
ຕັ້ງ). [2]ກັບບັນດາພີ່ນ້ອງທີ່ຢູ່ນຳເຮົາ. ເຖິງ ຄຣິສຕະຈັກທັງຫລາຍທີ່ຢູ່ໃນແຂວງ ຄາລາເຕຍ. [3]ຂໍ
ໃຫ້ພຣະຄຸນ ແລະ ສັນຕິສຸກ ຊຶ່ງມາຈາກ ພຣະບິດາ ເຈົ້າຂອງ ເຮົາທັງຫລາຍ ແລະ ພຣະເຢຊູຄຣິດ
ເຈົ້າ ຈົ່ງສະຖິດຢູ່ໃນເຈົ້າທັງຫລາຍເທີນ. [4]ພຣະເຢຊູ ຊົງສະຫລະພຣະກາຍຂອງພຣະອົງແທນ
ຄວາມຜິດບາບຂອງເຮົາທັງຫລາຍ ເພື່ອຈະໂຜດໃຫ້ເຮົາພົ້ນຈາກສະໄໝປັດຈຸບັນອັນຊົ່ວຮ້າຍນີ້
ຕາມນ້ຳພຣະໄທຂອງ ພຣະເຈົ້າ ຄື ພຣະບິດາຂອງເຮົາທັງຫລາຍ. [5]ຈົ່ງຖວາຍກຽດຕິຍົດແດ່
ພຣະອົງນັ້ນສືບໆ ໄປເປັນນິດ ອາແມນ.

### ບໍ່ມີຂ່າວປະເສີດອື່ນອີກ

[6]ເຮົາຮູ້ສຶກປະຫລາດໃຈທີ່ເຈົ້າທັງຫລາຍພາກັນລະຖິ້ມພຣະອົງຢ່າງຮີບດ່ວນ ພຣະອົງຊົງເອີ້ນ
ພວກເຈົ້າມາດ້ວຍພຣະຄຸນຂອງ ພຣະຄຣິດ ແຕ່ພວກເຈົ້າຕ່າວຄືນໄປຫາຂ່າວປະເສີດອັນແຕກ
ຕ່າງເສຍ. [7]ທີ່ຈິງ, ຂ່າວປະເສີດອັນອື່ນບໍ່ມີ ແຕ່ວ່າມີບາງຄົນໄດ້ເຮັດໃຫ້ພວກເຈົ້າວຸ້ນວາຍ ແລະ
ປາດຖະໜາທີ່ຈະປ່ຽນແປງຂ່າວປະເສີດເລື່ອງ ພຣະຄຣິດ. [8]ແຕ່ເຖິງແມ່ນວ່າພວກເຮົາຫລືເທວະ-
ດາຈາກສະຫວັນກໍດີ ຈະປະກາດຂ່າວປະເສີດໃຫ້ແກ່ເຈົ້າທັງຫລາຍ ນອກຈາກຂ່າວປະເສີດທີ່
ເຮົາໄດ້ປະກາດແກ່ພວກເຈົ້າແລ້ວນັ້ນ ກໍໃຫ້ຜູ້ນັ້ນຖືກປ້ອຍດ່າ. [9]ເໝືອນດັ່ງພວກເຮົາໄດ້ບອກໄວ້
ກ່ອນແລ້ວ ບັດນີ້ເຮົາບອກອີກວ່າ ຖ້າຜູ້ໃດປະກາດຂ່າວປະເສີດອື່ນແກ່ເຈົ້າທັງຫລາຍ ຄື ອັນທີ່
ຂັດກັບຂ່າວປະເສີດທີ່ພວກເຈົ້າໄດ້ຮັບໄວ້ແລ້ວ ກໍໃຫ້ຜູ້ນັ້ນຖືກປ້ອຍດ່າ. [10]ບັດນີ້ເຮົາກຳລັງຊອກ
ຫາເອົາໃຈມະນຸດຫລື ຫລືວ່າຊອບໃຫ້ເປັນທີ່ຊອບພຣະໄທ ພຣະເຈົ້າ ເຮົາພະຍາຍາມ ເພື່ອໃຫ້
ຖືກໃຈມະນຸດຫລື ຖ້າເຮົາພະຍາຍາມເພື່ອໃຫ້ຖືກໃຈມະນຸດແລ້ວ ເຮົາກໍບໍ່ເປັນຜູ້ຮັບໃຊ້[ກ] ຂອງ
ພຣະຄຣິດ.

### ການທີ່ໂປໂລເປັນອັກຄະສາວົກ

[11]ພີ່ນ້ອງທັງຫລາຍເອີຍ, ເຮົາຢາກໃຫ້ພວກເຈົ້າຮູ້ວ່າ ຂ່າວປະເສີດທີ່ເຮົາໄດ້ປະກາດແກ່ເຈົ້າ
ທັງຫລາຍນັ້ນ ບໍ່ແມ່ນຂອງມະນຸດ. [12]ດ້ວຍວ່າເຮົາບໍ່ໄດ້ຮັບຂ່າວປະເສີດນັ້ນຈາກມະນຸດ ຫລືບໍ່ມີ
ມະນຸດຄົນໃດສອນໃຫ້ເຮົາ ແຕ່ເຮົາໄດ້ຮັບຂ່າວປະເສີດນັ້ນໂດຍ ພຣະເຢຊູຄຣິດ ຊົງສະແດງແກ່
ເຮົາ.

[13]ເພາະວ່າເຈົ້າທັງຫລາຍໄດ້ຍິນເຖິງຊີວິດເບື້ອງຫລັງຂອງເຮົາ ເມື່ອເຮົາຢູ່ໃນລັດທິຢິວນັ້ນ

---

[ກ]ພາສາເດີມວ່າ "ຂ້ອຍໃຊ້."

ວ່າເຮົາໄດ້ຂົ່ມເຫງຄຣິສຕະຈັກຂອງ ພຣະເຈົ້າ ຢ່າງຮ້າຍແຮງເຫລືອເກີນ ແລະທຳຮ້າຍຕໍ່ຄຣິສຕະ-
ຈັກນັ້ນ. 14ແລະເມື່ອເຮົາໄດ້ຢູ່ໃນລັດທິຢິວນັ້ນ ເຮົາໄດ້ກ້າວໜ້າເກີນກວ່າເພື່ອນຫລາຍຄົນທີ່ມີ
ອາຍຸລຸ້ນດຽວ ແລະທີ່ເປັນຊາດດຽວກັນກັບເຮົາເພາະເຫດທີ່ເຮົາໄດ້ມີໃຈຮ້ອນຮົນຫລາຍກວ່າເຂົາ
ໃນເລື່ອງຂະນົບທຳນຽມທີ່ສືບມາແຕ່ບັນພະບຸລຸດຂອງເຮົາ. 15ແຕ່ ພຣະເຈົ້າ ໄດ້ຊົງໂຜດເລືອກ
ເຮົາໄວ້ຕັ້ງແຕ່ຢູ່ໃນທ້ອງມານດາ ແລະໄດ້ຊົງເອີ້ນເຮົາດ້ວຍພຣະຄຸນໃຫ້ມາຮັບໃຊ້ພຣະອົງ ແລະ
ເມື່ອພຣະອົງຊົງຊອບພຣະໄທ. 16ທີ່ຈະໂຜດສະແດງ ພຣະບຸດ ຂອງພຣະອົງໃຫ້ປະກົດແກ່ເຮົາ
ເພື່ອໃຫ້ເຮົາໄດ້ປະກາດຂ່າວປະເສີດເລື່ອງ ພຣະບຸດ ນັ້ນໃນຖ້າມກາງພວກຕ່າງຊາດ ເຮົາບໍ່ໄດ້
ປຶກສາກັບມະນຸດຄົນໃດ. 17ເຮົາບໍ່ໄດ້ຂຶ້ນເມືອຫາພວກທີ່ເປັນອັກຄະສາວົກກ່ອນເຮົາໃນກຸງ ເຢຣູ-
ຊາເລັມ ແຕ່ ເຮົາໄດ້ອອກໄປຍັງປະເທດ ອາຫລັບ ທັນທີແລ້ວໄດ້ກັບມາຍັງເມືອງ ດາມາເຊ ອີກ.

18ຫລັງຈາກນັ້ນມາໄດ້ສາມປີ ເຮົາໄດ້ຂຶ້ນເມືອຫາ ເກຟາ ທີ່ກຸງ ເຢຣູຊາເລັມ ແລະໄດ້ພັກຢູ່ກັບ
ທ່ານສິບຫ້າມື້. 19ແຕ່ອັກຄະສາວົກຄົນອື່ນເຮົາບໍ່ໄດ້ພົບ ເວັ້ນແຕ່ຢາໂກໂບ ນ້ອງຊາຍຂອງອົງ
ພຣະຜູ້ເປັນເຈົ້າ ເທົ່ານັ້ນ. 20(ໃນເລື່ອງທີ່ເຮົາຂຽນມາຍັງເຈົ້າທັງຫລາຍນີ້ ເຮົາກໍສາບານຕໍ່ພຣະ-
ພັກ ພຣະເຈົ້າ ວ່າ ເຮົາບໍ່ໄດ້ເວົ້າຕົວະ.) 21ຫລັງຈາກນັ້ນເຮົາໄດ້ໄປໃນເຂດແດນຊີເຣຍ ແລະ ກີລີ-
ເກຍ. 22ສ່ວນສະມາຊິກໃນຄຣິສຕະຈັກທັງຫລາຍທີ່ແຂວງ ຢູດາຍ ນັ້ນ ຍັງບໍ່ໄດ້ຮູ້ຈັກໜ້າຂອງ
ເຮົາ. 23ເຂົາພຽງແຕ່ໄດ້ຍິນວ່າ, ຜູ້ທີ່ແຕ່ກ່ອນເຄີຍໄດ້ກົດຂີ່ຂົ່ມເຫງພວກເຮົາ ບັດນີ້ໄດ້ປະກາດ
ຂ່າວປະເສີດເລື່ອງຄວາມເຊື່ອ ຊຶ່ງແຕ່ກ່ອນຕົນເຄີຍໄດ້ທຳຮ້າຍມາແລ້ວນັ້ນ. 24ເຂົາທັງຫລາຍ
ຖວາຍກຽດ ແກ່ພຣະເຈົ້າ ເພາະເນື່ອງດ້ວຍເຮົາ.

# ບົດທີ 2

## ອັກຄະສາວົກອື່ນ ໆ ຮັບຮູ້ໂປໂລ

1ຫລັງຈາກນັ້ນມາສິບສີ່ປີ ເຮົາກັບ ບາຣະນາບາ ໄດ້ຂຶ້ນເມືອຍັງກຸງ ເຢຣູຊາເລັມ ອີກແລະພາ ຕີ-
ໂຕ ໄປນຳ. 2ເຮົາໄດ້ຂຶ້ນເມືອຕາມທີ່ ພຣະເຈົ້າ ໄດ້ຊົງສະແດງ ແກ່ເຮົາແລະເຮົາໄດ້ເລົ່າຂ່າວປະ-
ເສີດ ທີ່ເຮົາເຄີຍປະກາດແກ່ພວກຕ່າງຊາດນັ້ນໃຫ້ເຂົາຟັງ (ແຕ່ຍັງໄດ້ເລົ່າໃຫ້ຄົນສຳຄັນຟັງເປັນ
ສ່ວນຕົວ) ເພາະຢ້ານວ່າເຮົາກຳລັງແລ່ນແຂ່ງກັນ ຫລືວ່າໄດ້ແລ່ນແຂ່ງແລ້ວດ້ວຍບໍ່ມີປະໂຫຍດ.
3ແຕ່ສ່ວນ ຕີໂຕ ຜູ້ຢູ່ກັບເຮົານັ້ນເຖິງແມ່ນວ່າເປັນຄົນຕ່າງຊາດກໍຕາມ ເຂົາກໍບໍ່ໄດ້ບັງຄັບໃຫ້ຮັບພິທີ
ຕັດ. 4ແຕ່ມີພີ່ນ້ອງທີ່ແປກປອມໄດ້ລັກລອບເຂົ້າມາ ເພື່ອຈະສອດແນມເບິ່ງເສລີພາບຂອງພວກ
ເຮົາ ທີ່ມີຢູ່ເພາະ ພຣະເຢຊູຄຣິດ ພວກເຂົາຫວັງຈະບັງຄັບພວກເຮົາໃຫ້ກັບໄປເປັນຂ້ອຍຂ້າອີກ.
5ແຕ່ພວກເຮົາບໍ່ໄດ້ອ່ອນຍອມຕໍ່ພວກເຂົາແມ່ນແຕ່ນາທີດຽວ ເພື່ອຈະໄດ້ຮັກສາຄວາມສັດຈິງຂອງ
ຂ່າວປະເສີດນັ້ນໄວ້ສຳລັບເຈົ້າທັງຫລາຍ.

6ສ່ວນຄົນເຫລົ່ານັ້ນທີ່ເຂົາຖືວ່າເປັນຄົນສຳຄັນ (ເຂົາຈະເຄີຍເປັນຄົນຢ່າງໃດມາກ່ອນແລ້ວກໍ
ຕາມ ກໍບໍ່ສຳຄັນຢ່າງໃດສຳລັບເຮົາ ພຣະເຈົ້າບໍ່ຊົງເຫັນແກ່ໜ້າຄົນໃດ) ຄົນເຫລົ່ານັ້ນທີ່ເຂົາຖືວ່າ
ເປັນຄົນສຳຄັນ ກໍບໍ່ໄດ້ເພີ່ມເຕີມສິ່ງໜຶ່ງສິ່ງໃດແກ່ເຮົາ. 7ແຕ່ກົງກັນຂ້າມ, ເມື່ອເຂົາເຫັນວ່າ
ພຣະເຈົ້າ ຊົງມອບໃຫ້ເຮົາປະກາດເລື່ອງຂ່າວປະເສີດແກ່ຄົນທີ່ບໍ່ຖືພິທີຕັດ, ເໝືອນດັ່ງ ພຣະເຈົ້າ

ໄດ້ຊົງມອບໃຫ້ ເປໂຕ ປະກາດຂ່າວປະເສີດແກ່ຄົນທີ່ຖືພິທີຕັດ. 8(ເພາະວ່າພຣະອົງຜູ້ໄດ້ຊົງບັນ
ດົນໃຈ ເປໂຕ ໃຫ້ເປັນຜູ້ໃຊ້ໄປຫາພວກຄົນທີ່ຖືພິທີຕັດ ກໍໄດ້ຊົງບັນດົນໃຈຂອງເຮົາໃຫ້ໄປຫາພວກ
ຕ່າງຊາດ ເໝືອນກັນ). 9ເມື່ອ ຢາໂກໂບ ກັບ ເກຟາ ແລະ ໂຢຮັນ ຜູ້ທີ່ເຂົາຖືວ່າເປັນຄົນຫລັກ ໄດ້
ສັງເກດເຫັນພຣະຄຸນທີ່ໄດ້ຊົງປະທານແກ່ເຮົາ, ທ່ານທັງສາມກໍໄດ້ຍື່ນມືຂວາໃຫ້ເຮົາກັບ ບາຣະ-
ນາບາ ຈັບ ເພື່ອສະແດງວ່າເຮົາເປັນເພື່ອນຮ່ວມງານກັນ, ເພື່ອໃຫ້ພວກເຮົາໄປຫາພວກຕ່າງຊາດ
ແລະທ່ານ ເຫລົ່ານັ້ນຈະໄປຫາພວກທີ່ຖືພິທີຕັດ. 10ແຕ່ທ່ານ ເຫລົ່ານັ້ນຂໍພຽງ ແຕ່ບໍ່ໃຫ້ເຮົາລືມຄຶດ
ເຖິງຄົນຍາກຈົນ ຊຶ່ງເປັນສິ່ງທີ່ເຮົາເອົາໃຈໃສ່ຈະເຮັດຢູ່ແລ້ວ.

## ໂປໂລຕໍ່ວ່າເປໂຕທີ່ອັນຕີໂອເຂຍ

11ແຕ່ເມື່ອ ເກຟາ ມາເຖິງ ເມືອງ ອັນຕີໂອເຂຍ ແລ້ວ ເຮົາກໍໄດ້ຄັດຄ້ານເພິ່ນຕໍ່ໜ້າ ເພາະເພິ່ນມີ-
ການຜິດພາດແທ້. 12ດ້ວຍວ່າກ່ອນທີ່ຄົນຂອງ ຢາໂກໂບ ມາເຖິງນັ້ນ ເກຟາ ກໍໄດ້ກິນຢູ່ກັບພວກ
ຕ່າງຊາດ ແຕ່ພໍເມື່ອຄົນພວກນັ້ນໄດ້ມາເຖິງແລ້ວ ເພິ່ນກໍໄດ້ຖອຍຕົວອອກໄປຢູ່ຕ່າງຫາກ ເພາະ
ຢ້ານພວກທີ່ຖືພິທີຕັດ. 13ແລະພວກ ຢິວ ຄົນອື່ນໆ ກໍໄດ້ເຂົ້າສ່ວນໃນການບໍ່ສັດຊື່ຂອງ ເກຟາ
ເຖິງແມ່ນ ບາຣະນາບາ ກໍໄດ້ຖືກດຶງໄປຕາມຄວາມບໍ່ຈິງໃຈຂອງຄົນເຫລົ່ານັ້ນ. 14ແຕ່ເມື່ອເຮົາເຫັນ
ວ່າເຂົາບໍ່ໄດ້ດຳເນີນໄປຕາມຄວາມຈິງຂອງຂ່າວປະເສີດນັ້ນ ເຮົາຈຶ່ງເວົ້າແກ່ ເກຟາ ຕໍ່ໜ້າຄົນທັງ
ປວງວ່າ, “ຖ້າທ່ານຜູ້ເປັນຊາດຢິວ ຍອມເຮັດໄປເໝືອນຄົນຕ່າງຊາດແລະບໍ່ເຮັດຄືຄົນຢິວ ເປັນ
ຫຍັງທ່ານຈຶ່ງບັງຄັບຄົນຕ່າງຊາດໃຫ້ເຮັດຕາມຮີດຄອງຊາວຢິວນັ້ນ.”

## ພວກຢິວກັບພວກຕ່າງຊາດຕ້ອງພົ້ນ
## ໂດຍທາງຄວາມເຊື່ອຢ່າງດຽວກັນ

15ຝ່າຍພວກເຮົາມີສັນຊາດເປັນຄົນຢິວ ບໍ່ໃຊ່ຄົນນອກຊາດທີ່ມີບາບ. 16ແຕ່ພວກເຮົາກໍຍັງຮູ້ຢູ່
ວ່າ ບໍ່ມີຜູ້ໃດຖືກຊົງຖືວ່າຊອບທຳໂດຍການປະຕິບັດຕາມພຣະບັນຍັດ ແຕ່ໂດຍທາງຄວາມເຊື່ອ
ໃນ ພຣະເຢຊູຄຣິດ ເທົ່ານັ້ນ ເຖິງແມ່ນພວກເຮົາກໍຍັງເຊື່ອໄວ້ໃຈໃນ ພຣະຄຣິດ ຄື ພຣະເຢຊູ ເພື່ອ
ຈະໄດ້ຊົງຖືວ່າເປັນຄົນຊອບທຳໂດຍຄວາມເຊື່ອໃນ ພຣະຄຣິດ ບໍ່ໃຊ່ໂດຍການປະຕິບັດຕາມ
ພຣະບັນຍັດ ເພາະວ່າໂດຍການປະຕິບັດຕາມພຣະບັນຍັດນັ້ນ “ບໍ່ມີມະນຸດຄົນໃດຈະຊົງຖືວ່າ
ເປັນຄົນຊອບທຳໄດ້.” 17ແຕ່ຖ້າພວກເຮົາພະຍາຍາມເພື່ອຈະໄດ້ຖືວ່າເປັນຄົນຊອບທຳໂດຍ
ພຣະຄຣິດ ພວກເຮົາເອງກໍຍັງປະກົດເປັນຄົນບາບຢູ່ ສັນນັ້ນ ພຣະຄຣິດ ຈະເປັນຜູ້ສົ່ງເສີມຄວາມ
ບາບຫລື ບໍ່ເປັນຢ່າງນັ້ນດອກ. 18ເພາະວ່າຖ້າເຮົາກໍ່ສິ່ງທີ່ເຮົາທຳລາຍລົງແລ້ວນັ້ນຂຶ້ນອີກ ເຮົາກໍ
ສະແດງຕົວເອງວ່າເປັນຜູ້ລ່ວງລະເມີດ. 19ເຫດວ່າໂດຍທາງພຣະບັນຍັດນັ້ນເຮົາໄດ້ຕາຍຈາກ
ພຣະບັນຍັດແລ້ວ ເພື່ອເຮົາຈະໄດ້ມີຊີວິດຢູ່ສຳລັບ ພຣະເຈົ້າ ເຮົາໄດ້ຖືກຄຶງໄວ້ກັບ ພຣະຄຣິດ
ແລ້ວ. 20ເຮົາຈຶ່ງບໍ່ມີຊີວິດຢູ່ ແຕ່ແມ່ນ ພຣະຄຣິດ ເປັນຜູ້ຊົງມີຊີວິດຢູ່ໃນເຮົາ ຊີວິດທີ່ເຮົາມີຢູ່ໃນ
ຮ່າງກາຍເວລານີ້ນັ້ນ ເຮົາກໍມີຢູ່ໂດຍທາງຄວາມເຊື່ອໃນ ພຣະບຸດ ຂອງພຣະອົງເຈົ້າ ຜູ້ຊົງຮັກເຮົາ
ແລະຊົງສະຫລະພຣະຊົນເອງແທນເຮົາ. 21ເຮົາບໍ່ໄດ້ເຮັດໃຫ້ພຣະຄຸນຂອງ ພຣະເຈົ້າ ເປັນໂມຄະ
ເພາະວ່າຖ້າຄວາມຊອບທຳໄດ້ມາໂດຍທາງພຣະບັນຍັດແລ້ວ ພຣະຄຣິດກໍຊົງສິ້ນພຣະຊົນໂດຍ
ບໍ່ມີປະໂຫຍດ.

# ບົດທີ 3

## ພຣະບັນຍັດ ຫລື ຄວາມເຊື່ອ

[1]ໂອ ຊາວຄາລາເຕຍ ຜູ້ບໍ່ມີຄວາມຄິດເອີຍ ໃຜໄດ້ສະກົດດວງຈິດຂອງເຈົ້າທັງຫລາຍ ໃຫ້
ຫລົງເຊື່ອໄປ ການທີ່ພຣະເຢຊູຊົງຖືກຄຶງໄວ້ນັ້ນ ກໍສະແດງຕໍ່ຕາຂອງພວກເຈົ້າຢ່າງຄັກແນ່
ແລ້ວ. [2]ເຮົາຢາກຮູ້ຂໍ້ດຽວຈາກພວກເຈົ້າວ່າ ເຈົ້າທັງຫລາຍໄດ້ຮັບພຣະວິນຍານນັ້ນໂດຍການ
ປະຕິບັດຕາມພຣະບັນຍັດຫລື ຫລືວ່າໄດ້ຮັບໂດຍການເຊື່ອຟັງຂໍ້ຄວາມທີ່ໄດ້ຍິນນັ້ນ. [3]ເຈົ້າທັງ-
ຫລາຍຍັງໂງ່ເຖິງພຽງນັ້ນຫລື ພວກເຈົ້າໄດ້ຕັ້ງຕົ້ນໂດຍທາງພຣະວິນຍານນັ້ນ ແລະບັດນີ້ພວກ
ເຈົ້າໄດ້ສຳເລັດລົງໂດຍທາງທຳມະດາມະນຸດຫລື. [4]ການທີ່ເຈົ້າທັງຫລາຍໄດ້ອົດທົນມາຫລາຍ
ແລ້ວນັ້ນເປັນການເສຍປະໂຫຍດຫລື ຖ້າເປັນການເສຍປະໂຫຍດແທ້. [5]ພຣະອົງຜູ້ຊົງປະທານ
ພຣະວິນຍານແກ່ເຈົ້າທັງຫລາຍ ແລະຊົງສະແດງອິດທິລິດຖ້າມກາງພວກເຈົ້າ ຊົງກະທຳການ
ເຫລົ່ານັ້ນເພາະດ້ວຍການປະຕິບັດຕາມພຣະບັນຍັດຫລື ຫລືວ່າເພາະດ້ວຍການເຊື່ອຟັງຂໍ້ຄວາມ
ທີ່ໄດ້ຍິນນັ້ນ.

[6]ເໝືອນດັ່ງອັບຣາຮາມນັ້ນແຫລະ “ທ່ານໄດ້ເຊື່ອພຣະເຈົ້າ ແລະຄວາມເຊື່ອນັ້ນພຣະເຈົ້າ
ໄດ້ຊົງນັບວ່າເປັນຄວາມຊອບທຳແກ່ທ່ານ.” [7]ສັນນັ້ນເຈົ້າທັງຫລາຍຈົ່ງຮູ້ວ່າ ຄົນທີ່ເຊື່ອນັ້ນ
ແຫລະ, ເປັນລູກຂອງອັບຣາຮາມ. [8]ແລະພຣະຄຳພີຮູ້ລ່ວງໜ້າກ່ອນວ່າ ພຣະເຈົ້າຈະຊົງຖືວ່າ
ຄົນຕ່າງຊາດເປັນຄົນຊອບທຳໂດຍທາງຄວາມເຊື່ອ ຈຶ່ງໄດ້ປະກາດເລື່ອງຂ່າວປະເສີດລ່ວງໜ້າ
ແກ່ອັບຣາຮາມວ່າ, “ຊົນຊາດທັງຫລາຍຈະໄດ້ຮັບພຣະພອນເພາະເຈົ້າ”. [9]ເຫດສັນນັ້ນຄົນທີ່
ເຊື່ອຈຶ່ງໄດ້ຮັບພຣະພອນດ້ວຍກັນກັບອັບຣາຮາມຜູ້ທີ່ເຊື່ອນັ້ນ. [10]ເພາະວ່າທຸກຄົນທີ່ອາໃສການ
ປະຕິບັດຕາມພຣະບັນຍັດກໍຢູ່ໃຕ້ຄວາມປ້ອຍດ່າ ເພາະພຣະຄຳພີຂຽນໄວ້ວ່າ, “ທຸກຄົນທີ່ບໍ່ໄດ້
ເຮັດຕາມຂໍ້ຄວາມທີ່ຂຽນໄວ້ໃນໜັງສືພຣະບັນຍັດທຸກຂໍ້ກໍຖືກປ້ອຍດ່າ”. [11]ເປັນທີ່ຮູ້ແຈ້ງແລ້ວວ່າ
ບໍ່ມີມະນຸດຄົນໃດທີ່ຊົງຖືວ່າເປັນຄົນຊອບທຳຕໍ່ພຣະພັກພຣະເຈົ້າໂດຍການປະຕິບັດພຣະບັນຍັດ
ເພາະວ່າ “ຜູ້ທີ່ຊົງຖືວ່າເປັນຄົນຊອບທຳເພາະດ້ວຍຄວາມເຊື່ອ ຜູ້ນັ້ນແຫລະ, ຈະໄດ້ຊີວິດ”.[ກ]
[12]ແຕ່ພຣະບັນຍັດນັ້ນບໍ່ໄດ້ອາໃສຄວາມເຊື່ອ ເພາະ “ຜູ້ທີ່ໄດ້ປະຕິບັດຕາມພຣະບັນຍັດກໍຈະດຳ-
ເນີນຊີວິດຢູ່ໂດຍພຣະບັນຍັດນັ້ນ”. [13]ພຣະຄຣິດໄດ້ໄຖ່ພວກເຮົາໃຫ້ພົ້ນຈາກຄວາມປ້ອຍດ່າຂອງ
ພຣະບັນຍັດ ໂດຍການທີ່ພຣະອົງຍອມຖືກປ້ອຍດ່າແທນພວກເຮົາ (ເພາະພຣະຄຳພີຂຽນໄວ້ວ່າ,
“ທຸກຄົນທີ່ຖືກແຂວນໄວ້ທີ່ຕົ້ນໄມ້ ກໍຖືກປ້ອຍດ່າແລ້ວ”. [14]ເພື່ອພຣະພອນທາງອັບຣາຮາມຈະໄດ້
ມາເຖິງຄົນຕ່າງຊາດທັງຫລາຍເພາະພຣະເຢຊູຄຣິດ ເພື່ອພວກເຮົາຈະໄດ້ຮັບພຣະວິນຍານຕາມ
ພຣະສັນຍາໂດຍຄວາມເຊື່ອ.

## ພຣະບັນຍັດ ແລະ ພຣະສັນຍາ

[15]ພີ່ນ້ອງທັງຫລາຍເອີຍ, ເຮົາຂໍຍົກຕົວຢ່າງຈັກເລື່ອງໜຶ່ງມາກ່າວ ເຖິງແມ່ນເປັນຄຳສັນຍາ
ຂອງມະນຸດ ເມື່ອໄດ້ຮັບຮອງກັນແລ້ວ ບໍ່ມີຜູ້ໃດຈະລົ້ມເລີກຫລືເພີ່ມເຕີມອີກໄດ້. [16]ບັນດາພຣະ-
ສັນຍາທີ່ໄດ້ຊົງກ່າວໄວ້ແກ່ອັບຣາຮາມແລະແກ່ເຊື້ອສາຍຂອງເພິ່ນນັ້ນ ບໍ່ໄດ້ຊົງກ່າວວ່າ, “ແລະ

[ກ]ຫລືວ່າ “ຄົນຊອບທຳຈະໄດ້ຊີວິດໂດຍທາງຄວາມເຊື່ອ.”

ແກ່ເຊື້ອສາຍທັງຫລາຍ” ເໝືອນກັບວ່າແກ່ຄົນຫລາຍຄົນ ແຕ່ເໝືອນກັບວ່າແກ່ຄົນຜູ້ດຽວ ຄື
“ແກ່ເຊື້ອສາຍຂອງທ່ານ” ຊຶ່ງເປັນ ພຣະຄຣິດ. 17ເຮົາຈຶ່ງເວົ້າຢ່າງນີ້ວ່າ ພຣະບັນຍັດທີ່ມາພາຍ-
ຫລັງເຖິງສີ່ຮ້ອຍສາມສິບປີ ຈະທຳລາຍພຣະສັນຍາຊຶ່ງ ພຣະເຈົ້າ ໄດ້ຕັ້ງໄວ້ກ່ອນນັ້ນໃຫ້ເປັນໂມ-
ຄະບໍ່ໄດ້. 18ເພາະວ່າຖ້າໄດ້ຮັບມໍລະດົກໂດຍທາງພຣະບັນຍັດ ກໍບໍ່ໃຊ່ໂດຍທາງພຣະສັນຍາອີກ
ຕໍ່ໄປ ແຕ່ ພຣະເຈົ້າ ໄດ້ໂຜດປະທານມໍລະດົກນັ້ນໃຫ້ແກ່ ອັບຣາຮາມ ນັ້ນໂດຍທາງພຣະສັນຍາ.

19ຖ້າດັ່ງນັ້ນແລ້ວ, ພຣະບັນຍັດມີໄວ້ເພື່ອຫຍັງ ທີ່ເພີ່ມພຣະບັນຍັດໄວ້ ກໍເພື່ອຄວາມຜິດບາບ
ຈະປະກົດເປັນການລ່ວງລະເມີດຈົນກວ່າເຊື້ອສາຍທີ່ໄດ້ຮັບພຣະສັນຍານັ້ນຈະມາເຖິງ ພວກເທ-
ວະດາໄດ້ຕັ້ງພຣະບັນຍັດນັ້ນໄວ້ດ້ວຍມືຂອງຄົນກາງ. 20ເມື່ອມີຝ່າຍດຽວກໍບໍ່ຕ້ອງການຄົນກາງ
ແລະ ພຣະເຈົ້າ ຊົງເປັນຝ່າຍດຽວນັ້ນ.

## ຈຸດປະສົງຂອງພຣະບັນຍັດ

21ຖ້າດັ່ງນັ້ນ, ພຣະບັນຍັດຂັດແຍ່ງກັບພຣະສັນຍາຂອງ ພຣະເຈົ້າ ຫລື ບໍ່ແມ່ນຢ່າງນັ້ນດອກ
ເພາະວ່າຖ້າຊົງປະທານພຣະບັນຍັດອັນອາດໃຫ້ມີຊີວິດຢູ່ໄດ້ ການຖືວ່າເປັນຄົນຊອບທຳຄົງຈະ
ໄດ້ມີຢູ່ໂດຍພຣະບັນຍັດນັ້ນແທ້. 22ແຕ່ພຣະຄຳພີໄດ້ຮອບຮວມສິ່ງທັງໝົດ ໃຫ້ເຂົ້າຢູ່ພາຍໃຕ້ອຳ-
ນາດຄວາມຜິດບາບ ເພື່ອວ່າທຸກຄົນທີ່ເຊື່ອຈະໄດ້ຮັບຂອງປະທານຕາມທີ່ຊົງສັນຍາໄວ້, ຊຶ່ງໄດ້
ໂຜດປະທານ ໂດຍອາໃສຄວາມເຊື່ອໃນ ພຣະເຢຊູຄຣິດ ເປັນຫລັກ.

23ເມື່ອຄວາມເຊື່ອຍັງບໍ່ທັນມານັ້ນ ພວກເຮົາໄດ້ຕົກຢູ່ໃນຂອບເຂດອຳນາດຂອງພຣະບັນຍັດ
ຖືກຄວບຄຸມໄວ້ຈົນເຖິງຄວາມເຊື່ອຈະໄດ້ມາປະກົດ. 24ເພາະສັນນັ້ນພຣະບັນຍັດຈຶ່ງປົກຄອງນຳ-
ພາພວກເຮົາໄປຈົນເຖິງ ພຣະຄຣິດ ສະເດັດມາ ເພື່ອພວກເຮົາຈະໄດ້ຊົງຖືວ່າເປັນຄົນຊອບທຳ
ໂດຍອາໃສຄວາມເຊື່ອ. 25ແຕ່ບັດນີ້ຄວາມເຊື່ອໄດ້ມາແລ້ວ ເຮົາທັງຫລາຍຈຶ່ງບໍ່ໄດ້ຢູ່ໃຕ້ບັງຄັບ
ຂອງຜູ້ປົກຄອງນຳພານັ້ນຕໍ່ໄປ. 26ເພາະວ່າເຈົ້າທັງຫລາຍກໍເປັນບຸດຂອງ ພຣະເຈົ້າ ຮ່ວມໃນ
ພຣະເຢຊູຄຣິດ ໂດຍທາງຄວາມເຊື່ອ. 27ດ້ວຍວ່າຝ່າຍພວກເຈົ້າຄົນໃດທີ່ໄດ້ຮັບບັບຕິສະມາໃນ
ພຣະຄຣິດ ແລ້ວ ຄົນນັ້ນກໍໄດ້ຫົ່ມຊີວິດ ພຣະຄຣິດ. 28ຈະບໍ່ເປັນຊາດຢິວຫລືຄົນຕ່າງຊາດ, ຈະບໍ່
ເປັນຂ້ອຍຂ້າຫລືອິດສາຫລະ, ຈະເປັນຊາຍຫລືຍິງ ເພາະວ່າເຈົ້າທັງປວງເປັນອັນໜຶ່ງອັນດຽວ
ກັນໃນ ພຣະຄຣິດ ຄື ພຣະເຢຊູ. 29ແລະຖ້າເຈົ້າທັງຫລາຍເປັນຂອງ ພຣະຄຣິດ ແລ້ວ ເຈົ້າກໍເປັນ
ເຊື້ອສາຍຂອງ ອັບຣາຮາມ ຄືເປັນຜູ້ຮັບມໍລະດົກຕາມພຣະສັນຍາ.

# ບົດທີ 4

1ເຮົາກ່າວດັ່ງນີ້ວ່າ ຕາບໃດເຈົ້າຂອງມໍລະດົກນັ້ນຍັງເປັນເດັກນ້ອຍຢູ່ ກໍບໍ່ຕ່າງກັນຢ່າງໃດກັບ
ຂ້ອຍຂ້າ ເຖິງແມ່ນວ່າຕົນຈະເປັນເຈົ້າຂອງຊັບທັງປວງກໍຕາມ. 2ແຕ່ກໍຍັງຢູ່ໃຕ້ບັງຄັບຜູ້ປົກຄອງ
ແລະຜູ້ດູແລຊັບ ຈົນເຖິງເວລາທີ່ບິດາໄດ້ກຳນົດໄວ້. 3ຝ່າຍພວກເຮົາກໍເໝືອນກັນ ເມື່ອຍັງເປັນ
ເດັກນ້ອຍຢູ່ ພວກເຮົາກໍເປັນຂ້ອຍຂ້າຢູ່ໃຕ້ອຳນາດສິ່ງສັກສິດທຳມະດາແຫ່ງສາກົນຈັກກະວານ.
4ແຕ່ເມື່ອຄົບກຳນົດແລ້ວ ພຣະເຈົ້າ ກໍຊົງໃຊ້ ພຣະບຸດ ຂອງພຣະອົງມາ ຊົງປະສູດຈາກຜູ້ຍິງ,
ແລະຊົງກຳເນີດໃຕ້ພຣະບັນຍັດ. 5ເພື່ອຈະຊົງໄຖ່ເອົາຄົນເຫລົ່ານັ້ນທີ່ຢູ່ໃຕ້ພຣະບັນຍັດ ເພື່ອໃຫ້

ພວກເຮົາໄດ້ຖານະເປັນບຸດ. 6ແລະເພາະເຈົ້າທັງຫລາຍເປັນບຸດຂອງ ພຣະເຈົ້າ ແລ້ວ ພຣະອົງຈຶ່ງ
ຊົງ ໃຊ້ ພຣະວິນຍານ ແຫ່ງ ພຣະບຸດ ຂອງພຣະອົງ ເຂົ້າມາ ໃນ ໃຈຂອງພວກເຮົາ ແລ້ວຮ້ອງວ່າ,
"ອັບບາ" ຄື "ພຣະບິດາ". 7ເຫດສັນນັ້ນ, ເພາະ ໂດຍ ພຣະເຈົ້າ ພວກເຈົ້າຈຶ່ງບໍ່ໄດ້ເປັນຂ້ອຍຂ້າຕໍ່
ໄປແຕ່ເປັນບຸດ ແລະຖ້າເປັນບຸດແລ້ວ ກໍເປັນເຈົ້າຂອງມໍລະດົກ.

## ໂປໂລເປັນຫ່ວງຜູ້ທີ່ເຊື່ອຖື

8ແຕ່ກ່ອນນີ້, ເມື່ອເຈົ້າທັງຫລາຍຍັງບໍ່ຮູ້ຈັກ ພຣະເຈົ້າ, ພວກເຈົ້າກໍ ເປັນຂ້ອຍຂ້າຂອງສິ່ງ
ຕ່າງໆ ຊຶ່ງຕາມທໍາມະດາແລ້ວມັນບໍ່ແມ່ນພຣະແທ້. 9ແຕ່ບັດນີ້ເຈົ້າທັງຫລາຍຮູ້ຈັກ ພຣະເຈົ້າ
ແລ້ວ (ຫລືຈະເວົ້າໃຫ້ຖືກກວ່າ ກໍວ່າ ພຣະເຈົ້າ ຊົງຮູ້ຈັກເຈົ້າທັງຫລາຍແລ້ວ) ດ້ວຍເຫດໃດພວກ
ເຈົ້າຈຶ່ງກັບໄປຫາອໍານາດສິ່ງສັກສິດທໍາມະດາ ອັນອ່ອນແອແລະບໍ່ມີປະໂຫຍດ, ພວກເຈົ້າຢາກ
ຕົກເປັນຂ້ອຍຂ້າຂອງມັນອີກຫລື. 10ພວກເຈົ້າຖືວັນ, ຖືເດືອນ, ຖືລະດູ, ແລະປີ. 11ເຮົາວິຕົກນໍາ
ເຈົ້າທັງຫລາຍ ຢ້ານວ່າການໜັກໜ່ວງທີ່ເຮົາໄດ້ເຮັດສໍາລັບເຈົ້ານັ້ນຈະບໍ່ເປັນປະໂຫຍດ. 12ພີ່-
ນ້ອງທັງຫລາຍເອີຍ, ເຮົາວອນຂໍໃຫ້ພວກເຈົ້າເກີດເປັນເໝືອນຢ່າງເຮົາ ເພາະເຮົາກໍເຄີຍເປັນ
ຢ່າງພວກເຈົ້າເໝືອນກັນ ເຈົ້າທັງຫລາຍບໍ່ໄດ້ເຮັດຜິດສິ່ງໃດຕໍ່ເຮົາ.

13ເຈົ້າທັງຫລາຍຮູ້ຢູ່ວ່າຕອນທີ່ວທີ ເຮົາໄດ້ປະກາດ ເລື່ອງຂ່າວປະເສີດ ແກ່ພວກເຈົ້າ ກໍເປັນ
ເພາະການເຈັບປ່ວຍທາງຮ່າງກາຍ. 14ເຖິງແມ່ນສຸຂະພາບຂອງເຮົາຈະເປັນການທົດລອງໃຈເຈົ້າ
ທັງຫລາຍກໍຕາມ ພວກເຈົ້າກໍບໍ່ໄດ້ໝິ່ນປະໝາດຫລືເປີດໜ່າຍເຮົາ ແຕ່ໄດ້ຕ້ອນຮັບເຮົາເໝືອນ
ກັບເປັນທູດຂອງ ພຣະເຈົ້າ ຫລືເໝືອນກັບອົງ ພຣະເຢຊູຄຣິດ. 15ເຈົ້າທັງຫລາຍລືມຄວາມຍິນດີ
ຂອງພວກເຈົ້າແລ້ວຫລື ເພາະເຮົາເປັນພະຍານໃຫ້ເຈົ້າທັງຫລາຍວ່າ ຖ້າເຮັດໄດ້, ພວກເຈົ້າກໍ
ຄົງຈະຄວັດໜ່ວຍຕາຂອງພວກເຈົ້າອອກໃຫ້ເຮົາ. 16ເພາະເຮົາໄດ້ບອກເຈົ້າທັງຫລາຍຕາມຄວາມ
ສັດຊື່ ເຮົາຈຶ່ງກາຍເປັນສັດຕູຂອງພວກເຈົ້າຫລື.

17ຄົນເຫລົ່ານັ້ນເຮັດເອົາອົກເອົາໃຈພວກເຈົ້າ ບໍ່ໃຊ່ດ້ວຍຄວາມຫວັງດີ ແຕ່ທີ່ຈິງ, ເຂົາຢາກ
ກີດກັນພວກເຈົ້າ ເພື່ອເຈົ້າທັງຫລາຍຈະໄດ້ເອົາອົກເອົາໃຈເຂົາ. 18ການເອົາອົກເອົາໃຈດ້ວຍ
ຄວາມຫວັງດີກໍເປັນການດີທຸກເວລາ ແລະບໍ່ໃຊ່ແຕ່ເມື່ອເວລາເຮົາຢູ່ນໍາພວກເຈົ້າເທົ່ານັ້ນ. 19ລູກ-
ນ້ອຍຂອງເຮົາເອີຍ, ເຮົາຕ້ອງເຈັບປວດເພາະພວກເຈົ້າອີກເໝືອນແມ່ເຈັບປວດເມື່ອເກີດລູກ ຈົນ
ກວ່າ ພຣະຄຣິດ ຈະໄດ້ຊົງກໍ່ກໍາເນີດຂຶ້ນພາຍໃນພວກເຈົ້າ. 20ເຮົາປາດຖະໜາຢາກຢູ່ກັບພວກເຈົ້າ
ດຽວນີ້ແລະຢາກປ່ຽນສຽງປາກຂອງເຮົາ ເພາະເຮົາຕົກສະລັງກັງວົນໃນພວກເຈົ້າ.

## ຄໍາປຽບເລື່ອງນາງຮາກາແລະນາງຊາຣາ

21ເຈົ້າທັງຫລາຍທີ່ຢາກຢູ່ໃຕ້ພຣະບັນຍັດ ພວກເຈົ້າບໍ່ໄດ້ຍິນພຣະບັນຍັດນັ້ນຫລື ຈົ່ງບອກເຮົາ
ດູ. 22ເພາະມີຄໍາຂຽນໄວ້ໃນພຣະຄໍາພີວ່າ ອັບຣາຮາມ ມີລູກຊາຍສອງຄົນ ຄົນໜຶ່ງເກີດຈາກຍິງ
ຂ້ອຍຂ້າ ແລະອີກຄົນໜຶ່ງເກີດຈາກຍິງບໍ່ເປັນຂ້ອຍຂ້າ. 23ລູກທີ່ເກີດຈາກຍິງເປັນຂ້ອຍຂ້ານັ້ນກໍ
ເກີດຕາມທໍາມະດາ ແຕ່ສ່ວນລູກທີ່ເກີດຈາກຍິງບໍ່ເປັນຂ້ອຍຂ້ານັ້ນ ກໍເກີດຕາມພຣະສັນຍາ.
24ຂໍ້ຄວາມນີ້ແມ່ນການປຽບທຽບ ເພາະວ່າຍິງທັງສອງນັ້ນໄດ້ແກ່ຄໍາສັນຍາສອງຢ່າງ ຜູ້ໜຶ່ງຄື
ຮາກາ, ເກີດລູກທີ່ເປັນຂ້ອຍຂ້າໄດ້ຄວາມສັນຍາມາຈາກພູຊີນາຍ. 25ນາງຮາການັ້ນໄດ້ແກ່ພູຊີ-

ນາຍ ໃນປະເທດ ອາຫລັບ ກົງກັບກຸງ ເຢຣູຊາເລັມ ໃນປັດຈຸບັນ ເພາະກຸງນີ້ກັບພົນລະເມືອງເປັນ
ຂ້ອຍຂ້າຢູ່. 26ແຕ່ວ່າ ເຢຣູຊາເລັມ ທີ່ຢູ່ເບື້ອງເທິງນັ້ນກໍເປັນອິດສະຫລະ ແລະເປັນມານດາຂອງ
ເຮົາທັງຫລາຍ. 27ເພາະມີຄຳຂຽນໄວ້ໃນພຣະຄຳພີວ່າ,

‘ໂອ ຍິງໝັນຜູ້ບໍ່ເກີດລູກເອີຍ, ຈົ່ງຊົມຊື່ນຍິນດີເທີນ
ຍິງຜູ້ບໍ່ເຈັບທ້ອງເກີດລູກເອີຍ, ຈົ່ງເປັ່ງສຽງໂຫ່ຮ້ອງ
ເພາະວ່າລູກຂອງແມ່ຮ້າງກໍຍັງມີຫລາຍ
ກວ່າລູກຂອງຍິງທີ່ມີຜົວ’.

28ແຕ່ພີ່ນ້ອງທັງຫລາຍ ເອີຍ, ເຮົາທັງຫລາຍກໍ ເປັນລູກຂອງພຣະສັນຍາ ເໝືອນຢ່າງ ອີຊາກ.
29ແຕ່ໃນຄາວນັ້ນຜູ້ທີ່ເກີດຕາມທຳມະດາ ໄດ້ຂົ່ມເຫງຜູ້ທີ່ເກີດຕາມ ພຣະວິນຍານ ສັນໃດ ປັດຈຸ-
ບັນນີ້ກໍ ເໝືອນກັນສັນນັ້ນ. 30ແຕ່ພຣະຄຳພີວ່າຢ່າງໃດ ກໍວ່າ, “ຈົ່ງຂັບໄລ່ຍິງຂ້ອຍຂ້າກັບລູກ
ຊາຍຂອງນາງອອກໜີໄປ ເພາະວ່າລູກຂອງຍິງຂ້ອຍຂ້ານັ້ນຈະຮັບມໍລະດົກຮ່ວມກັບລູກຂອງຍິງ
ທີ່ບໍ່ໄດ້ຂ້ອຍຂ້ານັ້ນບໍ່ໄດ້.” 31ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ, ພວກເຮົາບໍ່ໄດ້ເປັນລູກຂອງຍິງ
ຂ້ອຍຂ້າ ແຕ່ເປັນລູກຂອງຍິງທີ່ບໍ່ເປັນຂ້ອຍຂ້າ.

# ບົດທີ 5

## ຕັ້ງໝັ້ນຢູ່ໃນເສລີພາບ

1ເພື່ອ ເສລີພາບ ນັ້ນ ແຫລະ, ພຣະຄຣິດ ຈຶ່ງ ໄດ້ຊົງ ໂຜດ ໃຫ້ ເຮົາ ທັງຫລາຍ ເປັນ ອິດສະຫລະ
ເຫດສັນນັ້ນຈົ່ງຕັ້ງໝັ້ນຄົງຢູ່ ແລະຢ່າຍອມເຂົ້າທຽມແອກເປັນຂ້ອຍຂ້າອີກ. 2ເບິ່ງແມ ເຮົາ, ຄື
ໂປໂລ ຂໍບອກພວກເຈົ້າທັງຫລາຍວ່າຖ້າພວກເຈົ້າຮັບພິທີຕັດ ພຣະຄຣິດກໍຈະບໍ່ເປັນປະໂຫຍດ
ອັນໃດແກ່ພວກເຈົ້າ. 3ເຮົາເປັນພະຍານແກ່ທຸກຄົນທີ່ຮັບພິທີຕັດນັ້ນອີກວ່າ ເຂົາໄດ້ຖືກຜູກມັດໃຫ້
ປະຕິບັດຕາມພຣະບັນຍັດທັງໝົດ. 4ເຈົ້າທັງຫລາຍທີ່ປາດຖະໜາຈະໄດ້ຊົງຖືວ່າເປັນຄົນຊອບທຳ
ໂດຍພຣະບັນຍັດ ກໍໄດ້ຖືກຕັດຂາດເສຍຈາກ ພຣະຄຣິດ ແລະໄດ້ຫລຸດຕົກຈາກພຣະຄຸນແລ້ວ.
5ເພາະວ່າຝ່າຍພວກ ເຮົາ, ເຮົາຫວັງວ່າ ພຣະເຈົ້າ ຈະຊົງບັນດານ ໃຫ້ພວກ ເຮົາ ເປັນຄົນຊອບທຳ
ເຮົາຈຶ່ງລໍຄອຍການນັ້ນໂດຍ ພຣະວິນຍານ ແລະຄວາມເຊື່ອ. 6ເພາະວ່າໃນ ພຣະຄຣິດ ເຢຊູ ການ
ທີ່ຮັບພິທີຕັດຫລືບໍ່ຮັບກໍບໍ່ເກີດປະໂຫຍດອັນໃດ ແຕ່ຄວາມເຊື່ອຊຶ່ງສະແດງອອກເປັນຜົນໂດຍ
ທາງຄວາມຮັກເທົ່ານັ້ນສຳຄັນ.

7ເຈົ້າທັງຫລາຍກຳລັງແລ່ນແຂ່ງດີຢູ່ແລ້ວ ແມ່ນໃຜໄດ້ຂັດຂວາງພວກເຈົ້າບໍ່ໃຫ້ເຊື່ອຟັງຄວາມ
ຈິງ. 8ການຊັກຊວນຢ່າງນັ້ນບໍ່ໄດ້ມາຈາກພຣະອົງຜູ້ຊົງເອີ້ນເຈົ້າທັງຫລາຍ. 9ເຊື້ອແປ້ງເລັກໜ້ອຍ
ກໍເຮັດໃຫ້ແປ້ງນວດທັງໝົດຟູຂຶ້ນ. 10ເຮົາໄດ້ໄວ້ໃຈໃນອົງ ພຣະຜູ້ເປັນເຈົ້າ ວ່າ ເຈົ້າທັງຫລາຍຈະ
ບໍ່ມີຄວາມຄຶດຢ່າງອື່ນ ແຕ່ຝ່າຍຜູ້ທີ່ມາກໍ່ກວນພວກເຈົ້ານັ້ນ ຈະເປັນຜູ້ໃດກໍຕາມເຂົາຄົງຈະຕ້ອງ
ໄດ້ຮັບໂທດ. 11ພີ່ນ້ອງທັງຫລາຍເອີຍ, ຖ້າເຮົາຍັງປະກາດໃຫ້ຮັບພິທີຕັດ ເປັນດ້ວຍເຫດໃດເຮົາ
ຈຶ່ງຍັງຖືກຂົ່ມເຫງຢູ່ ຖ້າດັ່ງນັ້ນການສະດຸດໃຈຍ້ອນໄມ້ກາງແຂນກໍຖືກຍົກເລີກແລ້ວ. 12ສ່ວນຄົນ
ເຫລົ່ານັ້ນທີ່ກໍ່ຄວາມວຸ້ນວາຍຕໍ່ພວກເຈົ້າ ໃຫ້ເຂົາຕອນຕົວເອງເສຍ.

[13]ພວກພີ່ນ້ອງເອີຍ, ທີ່ຊົງເອີ້ນເຈົ້າທັງຫລາຍກໍເພື່ອໃຫ້ມີເສລີພາບ ແລະຢ່າເອົາເສລີພາບນັ້ນໄປເປັນຊ່ອງທາງປ່ອຍຕົວໄປຕາມທຳມະດາໂລກ ແຕ່ຈົ່ງຮັບໃຊ້[ກ] ເຊິ່ງກັນແລະກັນດ້ວຍຄວາມຮັກເທີນ. [14]ເພາະວ່າພຣະບັນຍັດທັງສິ້ນກໍຮວບຮວມເຂົ້າໃນຂໍ້ດຽວ ຄື "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ". [15]ແຕ່ວ່າຖ້າເຈົ້າທັງຫລາຍກັດກັນແລະກິນເນື້ອກັນ ຈົ່ງລະວັງ ຢ້ານວ່າຈະພາກັນຈິບຫາຍໄປ.

## ຜົນຂອງພຣະວິນຍານແລະການງານຂອງມະນຸດທຳມະດາ

[16]ແຕ່ເຮົາຂໍບອກວ່າ ຈົ່ງຍອມໃຫ້ພຣະວິນຍານເປັນຜູ້ຊົງນຳພາ ແລະເຈົ້າທັງຫລາຍຈະບໍ່ໄດ້ເຮັດຕາມຕັນຫາຂອງມະນຸດ. [17]ເພາະວ່າມະນຸດທຳມະດາມີຕັນຫາຕໍ່ສູ້ກັບພຣະວິນຍານ ແລະພຣະວິນຍານກໍຕໍ່ສູ້ກັບມະນຸດ ເພາະທັງສອງຝ່າຍເປັນສັດຕູກັນ ດັ່ງນັ້ນສິ່ງທີ່ເຈົ້າທັງຫລາຍຢາກເຮັດ ພວກເຈົ້າຈຶ່ງເຮັດບໍ່ໄດ້. [18]ແຕ່ຖ້າພຣະວິນຍານຊົງນຳພາເຈົ້າທັງຫລາຍໄປ ພວກເຈົ້າກໍບໍ່ຢູ່ໃຕ້ພຣະບັນຍັດ. [19]ແຕ່ການງານຂອງມະນຸດທຳມະດານັ້ນກໍປະກົດແຈ້ງແລ້ວ ຄື ການຫລິ້ນຊູ້, ການບໍ່ສະອາດ, ການລ່ວງປະເວນີ, ການໂລພະຕັນຫາ, [20]ການໄຫວ້ພຣະທຽມ, ການເຊື່ອເວດມົນຄາຖາ, ການເປັນສັດຕູກັນ, ການວິວາດຜິດຖຽງກັນ, ການເຫິງສາກັນ, ການຄຽດແຄ້ນກັນ, ການໃຝ່ສູງຕໍ່ກັນ, ການແຕກແຍກກັນ, ການຖືພັກຖືພວກ, [21]ການອິດສາກັນ, ການຂ້າກັນ, ການເສບສຸລາຢາເມົາ, ການກິນລ້ຽງຢ່າງຊົ່ວຊ້າ, ແລະການອື່ນໆ ໃນທຳນອງນີ້ອີກ ເຮົາຂໍເຕືອນເຈົ້າທັງຫລາຍເໝືອນກັບເຮົາໄດ້ເຕືອນພວກເຈົ້າລ່ວງໜ້າແລ້ວວ່າ ຄົນທີ່ເຄີຍເຮັດການຢ່າງນັ້ນຈະບໍ່ມີສ່ວນໃນລາຊະອານາຈັກຂອງພຣະເຈົ້າ.

[22]ຝ່າຍຜົນຂອງພຣະວິນຍານນັ້ນຄື ຄວາມຮັກ, ຄວາມຍິນດີ, ສັນຕິສຸກ, ຄວາມອົດກັ້ນໄວ້ນານ, ຄວາມປານີ, ຄວາມດີ, ຄວາມສັດຊື່, [23]ຄວາມສຸພາບອ່ອນຫວານ, ການຮູ້ຈັກບັງຄັບຕົນກົດໝາຍທີ່ຫ້າມການຢ່າງນີ້ກໍບໍ່ມີ. [24]ຜູ້ທີ່ຢູ່ຝ່າຍພຣະເຢຊູຄຣິດກໍໄດ້ເອົາຄວາມປາດຖະໜາກັບ-ຕັນຫາຂອງມະນຸດທຳມະດານັ້ນ ຄຶງໄວ້ທີ່ໄມ້ກາງແຂນແລ້ວ. [25]ຖ້າພວກເຮົາມີຊີວິດຢູ່ໂດຍພຣະວິນຍານກໍຈົ່ງດຳເນີນຊີວິດໄປຕາມພຣະວິນຍານດ້ວຍ. [26]ເຮົາຢ່າເປັນຄົນຖືຕົວເປົ່າໆ, ຢ່າກຸກກວນໃຈກັນ, ແລະຢ່າອິດສາກັນແລະກັນ.

# ບົດທີ 6

## ຊ່ອຍຮັບພາລະອັນໜັກຂອງກັນແລະກັນ

[1]ພວກພີ່ນ້ອງເອີຍ, ຖ້າຄົນໃດຫາກພົບຄົນທີ່ຫລົງຜິດປະການໃດ ເຈົ້າທັງຫລາຍຜູ້ຢູ່ຝ່າຍພຣະວິນຍານ ຈົ່ງຊ່ອຍຄົນຢ່າງນັ້ນດ້ວຍຄວາມອ່ອນສຸພາບໃຫ້ກັບຄືນດີໃໝ່ໂດຍໃຫ້ທຸກຄົນຄຶດເຖິງຕົນເອງ ຢ້ານວ່າຕົນຈະຖືກຊັກຈູງໃຫ້ຫລົງໄປ. [2]ຈົ່ງຊ່ອຍຮັບພາລະອັນໜັກຂອງກັນແລະກັນ ຖ້າເຮັດດັ່ງນີ້ພວກເຈົ້າກໍເຮັດຕາມພຣະບັນຍັດຂອງພຣະຄຣິດ. [3]ເພາະວ່າຖ້າຜູ້ໃດຖືຕົວວ່າເປັນຜູ້ສຳຄັນໃນເມື່ອຕົນບໍ່ສຳຄັນອັນໃດ ຜູ້ນັ້ນກໍລໍ້ລວງຕົນເອງ. [4]ທຸກຄົນຈົ່ງຊັ່ງນະສູດເບິ່ງການງານຂອງຕົນເອງຈຶ່ງຈະມີສິ່ງທີ່ເອົາມາອວດອ້າງໄດ້ໃນຕົວເອງ ໂດຍບໍ່ແມ່ນປຽບກັບຜູ້ອື່ນ.

[ກ]ພາສາເດີມວ່າ "ເປັນຂ້ອຍຂ້າ."

[5]ເພາະວ່າທຸກຄົນຕ້ອງຮັບຜິດຊອບຕໍ່ພາລະຂອງຕົນເອງ.

[6]ສ່ວນຜູ້ທີ່ຮັບພຣະທຳຄຳສອນແລ້ວ ຈົ່ງແບ່ງສິ່ງທີ່ດີທຸກຢ່າງໃຫ້ແກ່ຜູ້ທີ່ສອນຕົວເທີນ. [7]ຢ່າ
ເຂົ້າໃຈຜິດ ພວກເຈົ້າຈະຫລອກລວງພຣະເຈົ້າບໍ່ໄດ້ ເພາະວ່າຜູ້ໃດຫວ່ານສິ່ງໃດລົງກໍຈະເກັບ
ກ່ຽວສິ່ງນັ້ນ. [8]ຜູ້ທີ່ຫວ່ານຕາມຕັນຫາຂອງທຳມະດາມະນຸດກໍຈະເກັບກ່ຽວຄວາມເປື່ອຍເນົ່າຈາກ
ຕັນຫາມະນຸດນັ້ນ ແຕ່ຜູ້ທີ່ຫວ່ານຕາມພຣະວິນຍານ ກໍຈະເກັບກ່ຽວຊີວິດອັນຕະຫລອດໄປເປັນ-
ນິດຈາກພຣະວິນຍານນັ້ນ. [9]ຢ່າໃຫ້ພວກເຮົາເມື່ອຍລ້າໃນການເຮັດດີ ເພາະວ່າຖ້າໃຈພວກເຮົາ
ບໍ່ທໍ້ຖອຍ ເຮົາກໍຈະໄດ້ເກັບກ່ຽວຜົນຕາມເວລາອັນສົມຄວນ. [10]ເຫດສັນນັ້ນຕາມທີ່ມີໂອກາດ ໃຫ້
ພວກເຮົາເຮັດການດີຕໍ່ຄົນທັງປວງ ເປັນຕົ້ນວ່າຕໍ່ຄອບຄົວທີ່ຮ່ວມຢູ່ໃນຄວາມເຊື່ອ.

## ຄຳເຕືອນໃນຕອນສຸດທ້າຍແລະສະແດງຄວາມນັບຖື

[11]ເຈົ້າທັງຫລາຍຈົ່ງສັງເກດເບິ່ງຕົວອັກສອນທີ່ເຮົາໄດ້ຂຽນມາຍັງພວກເຈົ້າດ້ວຍມືຂອງເຮົາ
ເອງ ວ່າຕົວໃຫຍ່ປານໃດ.

[12]ຄົນທີ່ປາດຖະໜາຢາກໄດ້ໜ້າຕາມທຳມະດາມະນຸດ ເຂົາກໍຂົ່ມໃຈພວກເຈົ້າໃຫ້ຮັບພິທີຕັດ
ເພື່ອເຂົາຈະບໍ່ໄດ້ຖືກຂົ່ມເຫງເພາະເຫດໄມ້ກາງແຂນຂອງພຣະຄຣິດເທົ່ານັ້ນ. [13]ເຖິງແມ່ນພວກ
ຄົນທີ່ຮັບພິທີຕັດນັ້ນ ເຂົາກໍບໍ່ໄດ້ຖືຮັກສາພຣະບັນຍັດ ແຕ່ເຂົາປາດຖະໜາທີ່ຈະໃຫ້ພວກເຈົ້າຮັບ
ພິທີຕັດ ເພື່ອເຂົາຈະເອົາເລື່ອງເນື້ອກາຍຂອງພວກເຈົ້າໄປອວດອ້າງ. [14]ແຕ່ເຮົາບໍ່ຕ້ອງການ
ອວດນອກຈາກເລື່ອງໄມ້ກາງແຂນຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາ ຊຶ່ງໂດຍໄມ້ກາງແຂນ
ຂອງພຣະອົງນັ້ນ ໂລກຈຶ່ງຖືກຄຶງໄວ້ຈາກເຮົາ ແລະເຮົາກໍຖືກຄຶງໄວ້ຈາກໂລກເໝືອນກັນ.
[15]ເພາະວ່າການຮັບພິທີຕັດຫລືບໍ່ຮັບນັ້ນກໍບໍ່ສຳຄັນຢ່າງໃດ ແຕ່ການທີ່ຊົງສ້າງຂຶ້ນໃໝ່ນັ້ນສຳຄັນ.
[16]ສັນຕິສຸກແລະພຣະກະລຸນາພຣະຄຸນຈົ່ງມີແກ່ທຸກຄົນທີ່ເຮັດໄປຕາມຂໍ້ບັນຍັດນີ້ ຄືແກ່ພວກອິ-
ສຣາເອນຂອງພຣະເຈົ້າເທີນ.

[17]ຕັ້ງແຕ່ນີ້ຕໍ່ໄປ ຂໍຢ່າໃຫ້ຜູ້ໃດມາລົບກວນເຮົາອີກ ເພາະວ່າເຮົາມີຮອຍຕາປະທັບຂອງພຣະ-
ເຢຊູຄຣິດຢູ່ໃນເນື້ອກາຍຂອງເຮົາແລ້ວ.

[18]ພີ່ນ້ອງທັງຫລາຍເອີຍ, ຂໍໃຫ້ພຣະຄຸນຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາຈົ່ງສະຖິດຢູ່
ກັບຈິດວິນຍານຂອງເຈົ້າທັງຫລາຍເທີນ ອາແມນ.

* * *

# ຈົດໝາຍຂອງໂປໂລ ເຖິງຄຣິສຕະຈັກໃນເມືອງ
# ເອເຟໂຊ

## ບົດທີ 1

[1]ໂປໂລຜູ້ເປັນອັກຄະສາວົກຂອງ ພຣະເຢຊູຄຣິດ ຕາມນ້ຳພຣະໄທຂອງ ພຣະເຈົ້າ ເຖິງ ພວກ
ໄພ່ພົນຂອງ ພຣະເຈົ້າ[ກ] ຜູ້ທີ່ເຫລື້ອມໃສສັດທາໃນ ພຣະເຢຊູຄຣິດ. [2]ຂໍໃຫ້ພຣະຄຸນແລະສັນຕິສຸກ
ຊຶ່ງມາຈາກ ພຣະບິດາ ເຈົ້າຂອງ ເຮົາທັງຫລາຍ ແລະຈາກພຣະອົງເຈົ້າ ເຢຊູ ຄຣິດ ສະຖິດຢູ່ກັບ
ທ່ານທັງຫລາຍເທີນ.

### ພຣະພອນຝ່າຍວິນຍານໃນພຣະຄຣິດ

[3]ສາທຸການແດ່ ພຣະເຈົ້າ ຄື ພຣະບິດາຂອງ ພຣະເຢຊູຄຣິດ ເຈົ້າຂອງເຮົາທັງຫລາຍ ຜູ້ໄດ້ຊົງ
ໂຜດປະທານ ພຣະພອນທຸກປະການຝ່າຍວິນຍານ ໃຫ້ແກ່ເຮົາທັງຫລາຍ ໃນສະຫວັນສະຖານ
ໂດຍ ພຣະຄຣິດ. [4]ໃນ ພຣະຄຣິດນັ້ນ ພຣະອົງໄດ້ຊົງ ເລືອກພວກເຮົາໄວ້ຕັ້ງແຕ່ກ່ອນທີ່ຈະຊົງ
ວາງຮາກສ້າງໂລກ ເພື່ອເຮົາທັງຫລາຍຈະບໍລິສຸດ ໂດຍບໍ່ມີຂໍ້ຕິຕຽນໄດ້ຕໍ່ພຣະພັກຂອງພຣະອົງ.
[5]ພຣະອົງ ໄດ້ຊົງ ຄາດໝາຍ ພວກ ເຮົາ ໄວ້ກ່ອນ ດ້ວຍ ຄວາມ ຮັກ ໃຫ້ ເປັນ ບຸດ ຂອງ ພຣະອົງ ໂດຍ
ພຣະເຢຊູຄຣິດ ຕາມທີ່ຊອບພຣະໄທພຣະອົງ. [6]ເພື່ອຈະ ໃຫ້ເປັນທີ່ສັນລະເສີນພຣະຄຸນອັນຮຸ່ງ-
ເຮືອງຂອງພຣະອົງ ຊຶ່ງຊົງ ໂຜດປະທານ ແກ່ພວກເຮົາໃນ ພຣະເຢຊູຄຣິດ ຜູ້ຊົງ ເປັນທີ່ຮັກຂອງ
ພຣະເຈົ້າ. [7]ໃນ ພຣະເຢຊູນັ້ນ ພວກເຮົາໄດ້ຮັບການໄຖ່ໃຫ້ພົ້ນດ້ວຍພຣະໂລຫິດຂອງພຣະອົງ ຄື
ໄດ້ຮັບການອະໄພການຫລົງຜິດຂອງເຮົາ ໂດຍພຣະກະລຸນາອັນອຸດົມຂອງ ພຣະເຈົ້າ ຊຶ່ງໄດ້ຊົງ
ປະທານແກ່ພວກເຮົາຢ່າງລົ້ນເຫລືອ. [8]ຕາມພຣະສະຕິປັນຍາແລະຄວາມສະຫລາດສະຫລຽວທຸກ
ປະການ. [9]ພຣະເຈົ້າ ໄດ້ຊົງ ໂຜດໃຫ້ພວກເຮົາຮູ້ຈັກຄວາມລັບ ເລິກໃນນ້ຳພຣະໄທຂອງພຣະອົງ
ຕາມພຣະເຈດຕະນາຂອງພຣະອົງ ຊຶ່ງພຣະອົງໄດ້ຊົງຕັ້ງພຣະໄທໄວ້ກ່ອນໃນ ພຣະຄຣິດ. [10]ປະ-
ສົງວ່າ ເມື່ອເວລາກຳນົດຄົບບໍລິບູນແລ້ວພຣະອົງຈະຊົງຮວບຮວມສິ່ງສາລະພັດ ທັງທີ່ມີຢູ່ໃນຟ້າ
ສະຫວັນ ແລະ ແຜ່ນດິນໂລກ ໄວ້ໃນອົງ ພຣະຄຣິດ ຜູ້ຊົງ ເປັນພຣະປະມຸກ. [11]ໃນ ພຣະຄຣິດ ນັ້ນ
ພວກເຮົາໄດ້ຕົກເປັນສ່ວນຂອງ ພຣະເຈົ້າ ຕາມການຊົງຕັ້ງພຣະໄທໄວ້ກ່ອນຂອງພຣະອົງ ຜູ້ຊົງ
ກະທຳໃຫ້ສິ່ງສາລະພັດດຳເນີນໄປໃຫ້ສົມກັບນ້ຳພຣະໄທຂອງພຣະອົງ. [12]ພວກເຮົາຜູ້ເປັນຄົນ
ແຮກທີ່ຫວັງໃຈໃນ ພຣະຄຣິດ ໄດ້ຮັບກຳນົດ ແລະຮັບການ ແຕ່ງຕັ້ງ ໃຫ້ເປັນທີ່ຖວາຍສັນລະເສີນ
ແດ່ພຣະກຽດຕິຍົດຂອງພຣະອົງ. [13]ໃນພຣະອົງນັ້ນທ່ານທັງຫລາຍກໍເໝືອນກັນ ເມື່ອໄດ້ຍິນ
ພຣະທຳອັນສັດຈິງ ຄືຂ່າວປະເສີດເລື່ອງຄວາມພົ້ນຂອງພວກທ່ານ ແລະໄດ້ວາງໃຈໃນພຣະອົງ
ກໍໄດ້ຖືກປະທັບຕາໝາຍໄວ້ດ້ວຍ ພຣະວິນຍານບໍລິສຸດ ທີ່ຊົງສັນຍາໄວ້ນັ້ນ. [14]ເປັນເຄື່ອງມັດຈຳ
ຂອງການຮັບມໍລະດົກຂອງພວກເຮົາ ຈົນກວ່າພວກເຮົາຈະໄດ້ຮັບເປັນກຳມະສິດ, ເປັນທີ່ຖວາຍ

---

[ກ]ສຳເນົາກົກສະບັບເກົ່າແກ່ບາງສະບັບ ເພີ່ມເຕີມຂໍ້ຄວາມວ່າ "ໃນເມືອງເອເຟໂຊ."

ສັນລະເສີນແດ່ພຣະກຽດຕິຍົດຂອງພຣະອົງ.

### ຄຳອ້ອນວອນຂໍສະຕິປັນຍາແລະຄວາມຮູ້

15ເຫດສັນນັ້ນ, ເມື່ອເຮົາໄດ້ຍິນຂ່າວວ່າທ່ານທັງຫລາຍໄດ້ວາງໃຈໃນ ພຣະເຢຊູເຈົ້າ ແລະ
ພວກທ່ານຮັກພວກໄພ່ພົນຂອງ ພຣະເຈົ້າ. 16ເຮົາຈຶ່ງຂອບພຣະຄຸນເພາະທ່ານທັງຫລາຍຢູ່ສະເໝີ
ບໍ່ຂາດ ແລະລະນຶກເຖິງພວກທ່ານເມື່ອເຮົາອ້ອນວອນ. 17ເຮົາອ້ອນວອນວ່າຂໍ ພຣະເຈົ້າ ຂອງ
ພຣະເຢຊູຄຣິດ ເຈົ້າຂອງເຮົາທັງຫລາຍ ຄື ພຣະບິດາຜູ້ຊົງພຣະສະຫງ່າລາສີ ຊົງໂຜດປະທານ
ໃຫ້ທ່ານທັງຫລາຍມີຈິດໃຈປະກອບດ້ວຍສະຕິປັນຍາແລະຄວາມຮູ້ແຈ້ງເຫັນຈິງເຖິງເລື່ອງພຣະ-
ອົງ. 18ແລະຂໍຊົງໂຜດໃຫ້ຕາພາຍໃນຂອງທ່ານທັງຫລາຍສະຫວ່າງຂຶ້ນ ເພື່ອພວກທ່ານຈະໄດ້ຮູ້
ວ່າໃນການທີ່ພຣະອົງຊົງເອີ້ນພວກທ່ານນັ້ນ ພຣະອົງໄດ້ຊົງປະທານຄວາມຫວັງອັນໃດແກ່ພວກ
ທ່ານ ແລະຮູ້ວ່າມໍລະດົກຂອງພຣະອົງສຳລັບພວກໄພ່ພົນຂອງພຣະອົງນັ້ນມີສະຫງ່າລາສີອັນອຸ-
ດົມສົມບູນພຽງໃດ. 19ແລະຮູ້ວ່າລິດອຳນາດອັນໃຫຍ່ເຫລືອປະມານຂອງພຣະອົງມີຫລາຍພຽງໃດ
ສຳລັບພວກເຮົາທີ່ເຊື່ອ ຕາມອຳນາດຂອງພຣະກຳລັງແລະລິດທານຸພາບອັນຍິ່ງໃຫຍ່ຫລວງຂອງ
ພຣະອົງ. 20ຊຶ່ງພຣະອົງໄດ້ຊົງກະທຳໃນອົງ ພຣະຄຣິດ ເມື່ອຊົງບັນດານໃຫ້ພຣະອົງຄືນພຣະຊົນ
ແລະຊົງໃຫ້ປະທັບເບື້ອງຂວາພຣະຫັດຂອງ ພຣະເຈົ້າ ໃນສະຫວັນສະຖານ. 21ສູງກວ່າບັນດາຜູ້
ປົກຄອງ, ຜູ້ມີອຳນາດ, ຜູ້ມີລິດເດດ, ຜູ້ມີອານຸພາບ ແລະເໜືອກວ່ານາມຊື່ ທັງປວງທີ່ເຂົາເອີ່ຍ
ຂຶ້ນ ບໍ່ແມ່ນໃນສະໄໝນີ້ເທົ່ານັ້ນ ແຕ່ວ່າໃນສະໄໝທີ່ຈະມາເຖິງດ້ວຍ. 22ພຣະເຈົ້າ ໄດ້ຊົງປາບ
ສິ່ງສາລະພັດທັງປວງລົງໃຕ້ພຣະບາດຂອງ ພຣະຄຣິດ ແລະໄດ້ຊົງຕັ້ງພຣະອົງໄວ້ໃຫ້ເປັນພຣະ-
ປະມຸກເໜືອສິ່ງສາລະພັດແກ່ຄຣິສຕະຈັກ. 23ຊຶ່ງເປັນພຣະກາຍຂອງພຣະອົງ ຄື ຊຶ່ງເຕັມບໍລິບູນ
ດ້ວຍພຣະອົງ ຜູ້ຊົງເຕັມໃນທຸກທີ່ທຸກແຫ່ງທົ່ວສັບພະສິ່ງ.

## ບົດທີ 2

### ຈາກຄວາມຕາຍໄປສູ່ຊີວິດ

1ພຣະເຈົ້າ ໄດ້ຊົງບັນດານໃຫ້ທ່ານທັງຫລາຍຄືນມີຊີວິດເໝືອນກັນ[ກ] ເຖິງແມ່ນວ່າທ່ານທັງ-
ຫລາຍຕາຍແລ້ວໂດຍການຫລົງຜິດແລະເຮັດບາບ. 2ເມື່ອກ່ອນພວກທ່ານເຄີຍດຳເນີນຢູ່ໃນການ
ບາບນັ້ນ ຕາມວິທີຂອງໂລກ, ຕາມເຈົ້ານາຍແຫ່ງຍ່ານອາກາດ ຄືວິນຍານທີ່ຄອບຄອງຢູ່ໃນຄົນ
ທັງຫລາຍທີ່ບໍ່ເຊື່ອຟັງ. 3ເມື່ອກ່ອນ, ເຮົາທັງປວງເຄີຍດຳເນີນຊີວິດຕາມຕັນຫາຂອງຝ່າຍມະນຸດ
ທຳມະດາເໝືອນຄົນເຫລົ່ານັ້ນຄືດຳເນີນໄປຕາມຄວາມປາດຖະໜາຂອງຮ່າງກາຍແລະຂອງຈິດ-
ໃຈ ຕາມສັນດານພວກເຮົາເປັນຄົນຄວນຖືກພຣະພິໂລດເໝືອນດັ່ງຄົນອື່ນ.

4ແຕ່ ພຣະເຈົ້າ ຜູ້ຊົງປະກອບດ້ວຍພຣະກະລຸນາອັນອຸດົມ ເພາະເຫດຄວາມຮັກອັນໃຫຍ່ຫລວງ
ທີ່ພຣະອົງຊົງຮັກພວກເຮົານັ້ນ. 5ເຖິງແມ່ນວ່າເມື່ອພວກເຮົາຕາຍໄປແລ້ວໃນການຫລົງຜິດ
ພຣະອົງຍັງໄດ້ຊົງບັນດານໃຫ້ເຮົາມີຊີວິດຢູ່ກັບ ພຣະຄຣິດ (ທີ່ທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້
ພົ້ນນັ້ນກໍພົ້ນດ້ວຍພຣະຄຸນ). 6ແລະໄດ້ຊົງບັນດານໃຫ້ເຮົາເປັນຄືນມາດ້ວຍກັນກັບພຣະອົງ ແລະ

[ກ]ຫົວຂໍ້ທີ 1 ນີ້ກໍຕິດຕໍ່ມາຈາກບົດທີ1 ຂໍ້ທີ 20.

ໄດ້ຊົງ ໂຜດ ໃຫ້ ເຮົານັ່ງ ໃນ ສະຫວັນ ສະຖານ ດ້ວຍ ກັນ ກັບ ພຣະເຢຊູຄຣິດ. 7ເພື່ອ ໃນ ຄາວຕໍ່ໄປ
ພຣະອົງຈະ ໄດ້ຊົງສະແດງພຣະຄຸນອັນອຸດົມເຫລືອລົ້ນຂອງພຣະອົງ ໃນການຊຶ່ງພຣະອົງໄດ້ຊົງ
ເມດຕາເຮົາທັງຫລາຍໃນ ພຣະເຢຊູຄຣິດ. 8ດ້ວຍວ່າຊຶ່ງທ່ານທັງຫລາຍໄດ້ຖືກຊົງ ໂຜດໃຫ້ພົ້ນນັ້ນ
ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງ
ປະທານໃຫ້. 9ຄວາມພົ້ນນັ້ນບໍ່ແມ່ນມີມາຍ້ອນການປະຕິບັດ ເພື່ອບໍ່ໃຫ້ຄົນໜຶ່ງຄົນໃດອວດໄດ້.
10ເພາະວ່າເຮົາທັງຫລາຍເປັນສີພຣະຫັດຂອງພຣະອົງ ທີ່ຊົງສ້າງຂຶ້ນໃນ ພຣະເຢຊູຄຣິດ ເພື່ອໃຫ້
ປະກອບການດີ ຊຶ່ງພຣະເຈົ້າໄດ້ຊົງຈັດຕຽມລ່ວງໜ້າໄວ້ກ່ອນ ເພື່ອໃຫ້ພວກເຮົາປະຕິບັດຕາມ.

## ເຮັດໃຫ້ສອງຝ່າຍເປັນອັນໜຶ່ງອັນດຽວກັນໃນພຣະຄຣິດ

11ເຫດສັນນັ້ນຈົ່ງລະນຶກວ່າ ເມື່ອກ່ອນທ່ານທັງຫລາຍເປັນຄົນຕ່າງຊາດຕາມເນື້ອກາຍ ແລະ
ພວກທີ່ເຂົາເອີ້ນວ່າຝ່າຍພິທີຕັດ ຄືພວກທີ່ຮັບພິທີຕັດດ້ວຍມືມະນຸດນັ້ນເຄີຍເອີ້ນທ່ານທັງຫລາຍ
ວ່າ ຝ່າຍບໍ່ຮັບພິທີຕັດ. 12ຈົ່ງລະນຶກວ່າ ເມື່ອນັ້ນທ່ານທັງຫລາຍເປັນຄົນຢູ່ນອກ ພຣະຄຣິດ,
ຂາດຈາກການເປັນພົນລະເມືອງ ອິສຣາເອນ, ບໍ່ມີສ່ວນໃນບັນດາຄຳໝັ້ນສັນຍາທີ່ຊົງສັນຍາໄວ້
ນັ້ນ, ຢູ່ໃນໂລກໂດຍບໍ່ມີຄວາມຫວັງແລະບໍ່ມີພຣະເຈົ້າ. 13ແຕ່ບັດນີ້ທ່ານທັງຫລາຍຢູ່ໃນ ພຣະ-
ເຢຊູຄຣິດ ຊຶ່ງເມື່ອກ່ອນນັ້ນເຄີຍຢູ່ຫ່າງໄກ ແຕ່ໄດ້ຫຍັບເຂົ້າມາໃກ້ໂດຍພຣະໂລຫິດຂອງພຣະ-
ອົງ. 14ເພາະວ່າ ພຣະຄຣິດ ນັ້ນຊົງ ເປັນສັນຕິສຸກຂອງ ເຮົາທັງຫລາຍຄື ເປັນຜູ້ຊົງກະທຳ ໃຫ້ທັງ
ສອງຝ່າຍເຂົ້າເປັນພວກດຽວກັນ ພຣະອົງໄດ້ຊົງຮື້ກຳແພງທີ່ຂັ້ນລະຫວ່າງການເປັນສັດຕູກັນຖິ້ມ
ເສຍດ້ວຍພຣະກາຍຂອງພຣະອົງ. 15ພຣະອົງໄດ້ຊົງຍົກເລີກກົດຂອງພຣະບັນຍັດທີ່ໃຫ້ຖືສິນ
ຕ່າງໆ ເພື່ອຈະກະທຳໃຫ້ທັງສອງຝ່າຍເປັນຄົນໃໝ່ຄົນດຽວໃນພຣະອົງ ຢ່າງນັ້ນແຫລະ, ຈຶ່ງຊົງ
ບັນດານໃຫ້ເກີດສັນຕິສຸກ. 16ແລະເພື່ອຈະຊົງກະທຳໃຫ້ທັງສອງພວກຄືນດີກັນກັບ ພຣະເຈົ້າ
ເປັນກາຍອັນດຽວກັນໂດຍໄມ້ກາງແຂນ ຊຶ່ງເປັນສິ່ງທີ່ເຮັດໃຫ້ການເປັນສັດຕູກັນນັ້ນໝົດສິ້ນໄປ.
17ພຣະອົງໄດ້ສະເດັດມາປະກາດຂ່າວປະເສີດເລື່ອງສັນຕິສຸກແກ່ທ່ານທັງຫລາຍທີ່ຢູ່ຫ່າງໄກຈາກ
ພຣະເຈົ້າ ແລະປະກາດສັນຕິສຸກແກ່ພວກຄົນທີ່ຢູ່ໃກ້ພຣະອົງ. 18ເພາະໂດຍພຣະອົງນີ້ແຫລະ,
ເຮົາທັງສອງພວກຈຶ່ງມີໂອກາດເຂົ້າເຝົ້າ ພຣະບິດາ ໂດຍ ພຣະວິນຍານ ອົງດຽວກັນ. 19ເຫດສັນ-
ນັ້ນທ່ານທັງຫລາຍຈຶ່ງບໍ່ເປັນຄົນຕ່າງດ້າວທ້າວຕ່າງແດນອີກຕໍ່ໄປ ແຕ່ວ່າເປັນພົນລະເມືອງອັນ
ດຽວກັນກັບພວກໄພ່ພົນ ແລະເປັນຄົວເຮືອນຂອງ ພຣະເຈົ້າ. 20ພວກທ່ານໄດ້ຖືກສ້າງຂຶ້ນເທິງ
ຮາກຖານ ຊຶ່ງພວກອັກຄະສາວົກແລະພວກຜູ້ປະກາດພຣະທຳໄດ້ວາງລົງແລ້ວ, ອົງ ພຣະເຢຊູ-
ຄຣິດ ເອງຊົງ ເປັນຫີນ ເສົາເອກ. 21ໃນພຣະອົງນັ້ນທຸກສ່ວນຂອງ ໂຄງຮ່າງກໍຕິດ ເຊື່ອມຕໍ່ສະໜິດ
ເຂົ້າກັນໂດຍດີ ແລະຈະເລີນຂຶ້ນເປັນພຣະວິຫານອັນສັກສິດໃນອົງ ພຣະຜູ້ເປັນເຈົ້າ. 22ໃນພຣະ-
ອົງ ນັ້ນ ທ່ານ ທັງຫລາຍ ກຳລັງ ຖືກກໍ່ ຂຶ້ນ ໃຫ້ ເປັນ ທີ່ ສະຖິດ ຂອງ ພຣະເຈົ້າ ໂດຍ ພຣະວິນຍານ
ເໝືອນກັນ.

# ບົດທີ 3

## ຕຳແໜ່ງຮັບໃຊ້ຂອງໂປໂລທີ່ມີຕໍ່ຄົນຕ່າງຊາດ

1ເພາະເຫດນີ້ຂ້າພຣະເຈົ້າ, ໂປໂລ, ຜູ້ທີ່ຖືກຈຳຈອງເພາະເຫັນແກ່ພຣະເຢຊູຄຣິດເພື່ອທ່ານ
ທັງຫລາຍທີ່ເປັນຄົນຕ່າງຊາດ.[ກ] 2ຂ້າພະເຈົ້າເຊື່ອວ່າທ່ານທັງຫລາຍໄດ້ຍິນເຖິງພຣະຄຸນຂອງ
ພຣະເຈົ້າ ທີ່ຊົງໂຜດປະທານແກ່ຂ້າພະເຈົ້າແລ້ວວ່າ ໃຫ້ຮັບໃຊ້ປະຕິບັດຕາມຕຳແໜ່ງນີ້ເພື່ອ
ທ່ານທັງຫລາຍ. 3ຄືວ່າພຣະອົງໄດ້ຊົງສະແດງໃຫ້ຂ້າພະເຈົ້າຮູ້ຂໍ້ເລິກລັບ ຕາມທີ່ຂ້າພະເຈົ້າໄດ້
ຂຽນໄວ້ແລ້ວຢ່າງຫຍໍ້ໆ. 4ເມື່ອທ່ານທັງຫລາຍອ່ານຄຳເຫລົ່ານັ້ນແລ້ວ ທ່ານກໍຈະຮູ້ເຖິງຄວາມ
ເຂົ້າໃຈຂອງຂ້າພະເຈົ້າໃນເລື່ອງຄວາມລັບເລິກຂອງອົງພຣະຄຣິດ. 5ຊຶ່ງໃນສະໄໝກ່ອນພຣະອົງ
ບໍ່ໄດ້ຊົງໂຜດສະແດງແກ່ມະນຸດ ເໝືອນຢ່າງບັດນີ້ໄດ້ຊົງໂຜດສະແດງແກ່ພວກອັກຄະສາວົກທີ່
ບໍລິສຸດ ແລະພວກຜູ້ປະກາດພຣະທຳໂດຍພຣະວິນຍານ. 6ວ່າຄົນຕ່າງຊາດນັ້ນໄດ້ເປັນຜູ້ຮັບມໍ-
ລະດົກຮ່ວມກັນ, ແລະເປັນອະໄວຍະວະຂອງກາຍອັນດຽວກັນ, ກັບມີສ່ວນໄດ້ຮັບພຣະສັນຍາ
ໃນພຣະເຢຊູຄຣິດໂດຍທາງຂ່າວປະເສີດ. 7ຂ້າພະເຈົ້າໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ຮັບໃຊ້ຂ່າວ
ປະເສີດ ຕາມພຣະຄຸນຊຶ່ງເປັນຂອງພຣະລາຊະທານຈາກພຣະເຈົ້າ ຊຶ່ງຊົງໂຜດປະທານແກ່ຂ້າ-
ພະເຈົ້າໂດຍລິດອຳນາດຂອງພຣະອົງຊົງກະທຳ. 8ເຖິງແມ່ນຂ້າພະເຈົ້າເປັນຜູ້ນ້ອຍກວ່າຜູ້ທີ່ນ້ອຍ
ທີ່ສຸດໃນພວກໄພ່ພົນທັງໝົດຂອງພຣະເຈົ້າ ກໍຊົງໂຜດປະທານພຣະຄຸນນີ້ແກ່ຂ້າພະເຈົ້າ ຄືໃຫ້
ຂ້າພະເຈົ້າປະກາດຂ່າວປະເສີດແກ່ຄົນຕ່າງຊາດ ເຖິງເລື່ອງຄວາມບໍລິບູນອັນຫາທີ່ປຽບບໍ່ໄດ້
ຂອງອົງພຣະຄຣິດ. 9ແລະເຮັດໃຫ້ຄົນທັງປວງເຫັນແຈ້ງໃນແຜນການແຫ່ງຂໍ້ລັບເລິກ ທີ່ຊົງອັດ
ບັງໄວ້ກັບພຣະເຈົ້າ ຜູ້ຊົງນິລະມິດສ້າງສັບພະສິ່ງທັງປວງຄືຊົງອັດບັງໄວ້ຕັ້ງແຕ່ແຮກສ້າງໂລກ.
10ເພື່ອວ່າໃນປັດຈຸບັນນີ້ ຜູ້ປົກຄອງແລະຜູ້ມີອຳນາດໃນສະຫວັນສະຖານ ຈະໄດ້ຮູ້ຍັງພຣະສະຕິ-
ປັນຍາອັນຊັບຊ້ອນຂອງພຣະເຈົ້າໂດຍທາງຄຣິສຕະຈັກ. 11ອັນນີ້ກໍເປັນໄປຕາມພຣະປະສົງອັນ
ຖາວອນຂອງພຣະເຈົ້າ ທີ່ພຣະອົງໄດ້ຊົງກະທຳໃຫ້ສຳເລັດດ້ວຍພຣະເຢຊູຄຣິດເຈົ້າຂອງເຮົາ
ທັງຫລາຍ. 12ໃນພຣະອົງນັ້ນພວກເຮົາຈຶ່ງມີໃຈກ້າ ແລະມີໂອກາດທີ່ຈະເຂົ້າເຝົ້າພຣະເຈົ້າໄດ້
ດ້ວຍຄວາມໄວ້ໃຈເພາະຄວາມເຊື່ອໃນພຣະອົງ. 13ເຫດສັນນັ້ນຂ້າພະເຈົ້າຈຶ່ງຂໍຮ້ອງທ່ານທັງ-
ຫລາຍວ່າ ຢ່າທໍ້ໃຈຍ້ອນຄວາມຍາກລຳບາກຂອງຂ້າພະເຈົ້າຊຶ່ງມີເພາະເຫັນແກ່ພວກທ່ານ ອັນ
ເປັນກຽດຕິຍົດຂອງພວກທ່ານເອງ.

## ໃຫ້ຮູ້ຈັກຄວາມຮັກຂອງພຣະຄຣິດ

14[ຂ] ເພາະເຫດນີ້ຂ້າພະເຈົ້າຈຶ່ງຄູ້ເຂົ່າລົງຕໍ່ພຣະພັກພຣະບິດາ. 15(ຄຳວ່າ ບິດາ ຂອງທຸກ
ຄອບຄົວໃນສະຫວັນແລະທີ່ແຜ່ນດິນໂລກ ກໍໄດ້ຊື່ມາຈາກພຣະບິດາ). 16ຂໍໃຫ້ພຣະອົງ ຊົງໂຜດ
ປະທານກຳລັງອັນເຂັ້ມແຂງຝ່າຍຈິດໃຈແກ່ທ່ານທັງຫລາຍຕາມຄວາມອຸດົມສົມບູນແຫ່ງພຣະສະ-
ຫງ່າລາສີຂອງພຣະອົງ ໂດຍເດດພຣະວິນຍານຂອງພຣະອົງ. 17ເພື່ອພຣະຄຣິດຈະຊົງຕັ້ງຢູ່ໃນ
ໃຈຂອງທ່ານທັງຫລາຍ ທາງຄວາມເຊື່ອ ເພື່ອວ່າ, ເມື່ອພວກທ່ານໄດ້ວາງຮາກລົງຢ່າງໝັ້ນຄົງ

---

[ກ]ພາສາເດີມ ປະໂຫຍກນີ້ບໍ່ຄົບ. [ຂ]ປະໂຫຍກອັນບໍ່ຄົບຖ້ວນທີ່ເປັນຂໍ້ກົກບົດ ທີ3 ນີ້ອາດຕິດຕໍ່ຂໍ້ 14 ນີ້
ແລ້ວ.

ໃນຄວາມຮັກແລ້ວ, [18]ພວກທ່ານກໍຈະມີຄວາມສາມາດເຂົ້າໃຈ, ພ້ອມກັບໄພ່ພົນທັງປວງຂອງ
ພຣະອົງ, ເຖິງຄວາມກວ້າງ, ຄວາມຍາວ, ຄວາມສູງ, ແລະຄວາມເລິກ. [19]ທັງຈະຮູ້ຈັກຄວາມ
ຮັກຂອງອົງ ພຣະຄຣິດ ຊຶ່ງເກີນຄວາມຮູ້ ເພື່ອທ່ານທັງຫລາຍຈະໄດ້ຮັບຄວາມເຕັມບໍລິບູນຂອງ
ພຣະເຈົ້າທຸກປະການ.

[20]ຂໍໃຫ້ພຣະກຽດຈົ່ງມີແກ່ພຣະອົງ ຜູ້ຊົງລິດສາມາດກະທຳນອກເໜືອສາລະພັດຫລືຊົງສາ-
ມາດກະທຳເໜືອກວ່າທີ່ພວກເຮົາຈະຂໍຫລືຄຶດໄດ້ ຕາມລິດອຳນາດທີ່ກຳລັງດຳເນີນຢູ່ພາຍໃນຕົວ
ເຮົາທັງຫລາຍ. [21]ຈົ່ງຖວາຍພຣະກຽດແກ່ພຣະອົງໃນຄຣິສຕະຈັກແລະໃນ ພຣະເຢຊູຄຣິດ ທຸກ
ຊົ່ວອາຍຸຄົນຕະຫລອດໄປເປັນນິດ ອາແມນ.

# ບົດທີ 4

## ຄວາມເປັນອັນໜຶ່ງອັນດຽວກັນທີ່ພຣະວິນຍານຊົງປະທານ

[1]ເຫດສັນນັ້ນຂ້າພະເຈົ້າ, ຜູ້ຖືກຈຳຈອງ ເພາະ ເຫັນແກ່ອົງ ພຣະຜູ້ເປັນເຈົ້າ, ຈຶ່ງວອນຂໍທ່ານ
ທັງຫລາຍໃຫ້ດຳເນີນຊີວິດສົມກັບທີ່ພວກທ່ານໄດ້ຊົງເອີ້ນເອົາແລ້ວນັ້ນ. [2]ຄື ຈົ່ງມີໃຈຖ່ອມລົງທຸກ
ຢ່າງ ແລະ ໃຈອ່ອນສຸພາບ, ດ້ວຍຄວາມພຽນອົດທົນ ແລະ ຜ່ອນໜັກຜ່ອນ ເບົາ ເຊິ່ງກັນ ແລະກັນ
ດ້ວຍຄວາມຮັກ. [3]ຈົ່ງພຽນພະຍາຍາມເອົາສັນຕິສຸກຜູກມັດ ເພື່ອຮັກສາຄວາມເປັນນ້ຳໜຶ່ງໃຈດຽວ
ກັນ ຊຶ່ງ ພຣະວິນຍານ ຊົງປະທານໃຫ້ນັ້ນ. [4]ມີກາຍດຽວແລະມີພຣະວິນຍານ ອົງດຽວ ເໝືອນມີ
ຄວາມຫວັງໃຈອັນດຽວທີ່ເນື່ອງໃນການທີ່ຊົງເອີ້ນເອົາພວກທ່ານແລ້ວນັ້ນ. [5]ມີອົງ ພຣະຜູ້ເປັນເຈົ້າ
ອົງດຽວ, ມີຄວາມເຊື່ອດຽວ, ມີບັບຕິສະມາອັນດຽວ. [6]ມີພຣະເຈົ້າອົງດຽວ ຄືພຣະບິດາຂອງຄົນ
ທັງປວງ ຜູ້ຊົງສະຖິດຢູ່ເທິງຄົນທັງປວງ, ແລະທົ່ວຄົນທັງປວງ, ແລະໃນຄົນທັງປວງ.

[7]ແຕ່ວ່າພຣະຄຸນນັ້ນຊົງໂຜດປະທານແກ່ເຮົາທຸກໆ ຄົນ ຕາມຂອງພຣະລາຊະທານທີ່ພຣະ-
ຄຣິດ ໄດ້ຊົງກຳນົດໄວ້. [8]ເຫດສັນນັ້ນຈຶ່ງມີພຣະທຳກ່າວວ່າ, “ເມື່ອໄດ້ສະເດັດຂຶ້ນເມືອສູ່ສະຖານ-
ທີ່ສູງພຣະອົງກໍຊົງນຳພາພວກຊະເລີຍໄປແລະຊົງປະທານຂອງພຣະລາຊະທານໃຫ້ແກ່ມະນຸດ.”
[9](ທີ່ກ່າວວ່າ “ພຣະອົງໄດ້ສະເດັດຂຶ້ນເມືອ” ນັ້ນ ຈະໝາຍຄວາມຢ່າງອື່ນບໍ່ໄດ້ ນອກຈາກວ່າ
ພຣະອົງໄດ້ສະເດັດລົງໄປສູ່ເບື້ອງຕ່ຳຂອງແຜ່ນດິນໂລກແລ້ວດ້ວຍ. [10]ພຣະອົງຜູ້ສະເດັດລົງໄປ
ນັ້ນ ກໍຄືພຣະອົງຜູ້ທີ່ໄດ້ສະເດັດຂຶ້ນເມືອສູ່ທີ່ສູງເໜືອຟ້າສະຫວັນທັງປວງນັ້ນເອງ ເພື່ອຈະໄດ້
ສະຖິດຢູ່ໃນທົ່ວພິພົບ). [11]ຂອງພຣະລາຊະທານຂອງພຣະອົງ ກໍຄືໃຫ້ລາງຄົນເປັນອັກຄະສາວົກ,
ລາງຄົນເປັນຜູ້ປະກາດພຣະທຳ, ລາງຄົນເປັນຜູ້ປະກາດຂ່າວປະເສີດ, ລາງຄົນເປັນສິດຍາພິ-
ບານແລະອາຈານ. [12]ເພື່ອຈັດຕຽມໄພ່ພົນທັງຫລາຍຂອງພຣະອົງໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມ
ເພື່ອ ເສີມສ້າງ ພຣະກາຍ ຂອງ ພຣະຄຣິດ ໃຫ້ຈະເລີນຂຶ້ນ. [13]ຈົນກວ່າ ເຮົາທຸກຄົນ ຈະບັນລຸ ເຖິງ
ຄວາມເປັນນ້ຳໜຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງເລື່ອງ ພຣະບຸດ ຂອງ ພຣະເຈົ້າ
ຈົນ ກວ່າ ເຮົາ ຈະ ເປັນ ຄົນ ໃຫຍ່ ເຕັມ ສ່ວນ ຄື ເຕັມ ເຖິງ ຂະໜາດ ຄວາມ ສົມບູນ ຂອງ ພຣະຄຣິດ.
[14]ເພື່ອພວກເຮົາຈະບໍ່ໄດ້ເປັນເດັກນ້ອຍອີກຕໍ່ໄປ ຖືກພັດໄປພັດມາ ແລະຫັນເຫໄປມາດ້ວຍລົມ-
ປາກຂອງຄຳສັ່ງສອນທຸກຢ່າງ ແລະດ້ວຍ ເລ້ກົນຂອງມະນຸດທີ່ຫລອກລວງໃຫ້ຫລົງຕາມອຸບາຍ

ອັນສະຫລາດຂອງເຂົາ. [15]ແຕ່ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍໃຈຮັກ ເພື່ອຈະຈະເລີນຂຶ້ນ
ທຸກຢ່າງຈົນເຖິງພຣະອົງຜູ້ເປັນສີສະ ຄືພຣະຄຣິດ. [16]ເນື່ອງຈາກພຣະອົງນັ້ນ ຮ່າງກາຍທັງສິ້ນທີ່
ຕິດຕໍ່ສະໜິດແລະຜູກພັນກັນໂດຍທຸກໆ ຂໍ້ຕໍ່ທີ່ຊົງປະທານ ຈຶ່ງໄດ້ຈະເລີນໃຫຍ່ຂຶ້ນດ້ວຍຄວາມ
ຮັກ ເມື່ອອະໄວຍະວະທຸກສ່ວນເຮັດໜ້າທີ່ຕາມຄວາມເໝາະສົມແລ້ວ.

## ຊີວິດໃໝ່ໃນພຣະຄຣິດ

[17]ເຫດສັນນັ້ນຂ້າພະເຈົ້າຈຶ່ງຂໍຢືນຢັນ ແລະເປັນພະຍານໃນພຣະນາມຂອງອົງ ພຣະຜູ້ເປັນ-
ເຈົ້າວ່າ ຕັ້ງແຕ່ນີ້ຕໍ່ໄປທ່ານທັງຫລາຍຢ່າດຳເນີນຊີວິດຕາມຢ່າງຄົນຕ່າງຊາດທີ່ພວກເຂົາດຳເນີນ
ກັນນັ້ນ ຄືດ້ວຍໃຈໂງ່ອັນຫາປະໂຫຍດບໍ່ໄດ້. [18]ໂດຍທີ່ຄວາມຄຶດຂອງເຂົາມືດມົນໄປ ແລະເຂົາ
ຢູ່ຫ່າງຈາກຊີວິດຊຶ່ງມາຈາກພຣະເຈົ້າ ເພາະເຫດຄວາມບໍ່ຮູ້ເທົ່າເຖິງການທີ່ມີຢູ່ໃນຕົວພວກເຂົາ
ອັນເນື່ອງຈາກໃຈແຂງກະດ້າງຂອງເຂົາ. [19]ເຂົາບໍ່ມີຄວາມຮູ້ສຶກຢ້ານກົວຕໍ່ບາບ ຈຶ່ງໄດ້ປ່ອຍຕົວ
ໄປໃນທາງໂລພະຕັນຫາ ເພື່ອເຮັດການຊົ່ວຮ້າຍທຸກຢ່າງໂດຍສຸດຄວາມປາດຖະໜາ. [20]ແຕ່ວ່າ
ທ່ານທັງຫລາຍບໍ່ໄດ້ຮຽນຮູ້ຈັກພຣະຄຣິດຢ່າງນັ້ນ. [21]ຖ້າແມ່ນວ່າພວກທ່ານໄດ້ຍິນເລື່ອງພຣະອົງ
ແລ້ວໄດ້ຮັບຄຳສັ່ງສອນເລື່ອງພຣະອົງຕາມຄວາມຈິງຊຶ່ງມີຢູ່ໃນພຣະເຢຊູແລ້ວ. [22]ພວກທ່ານຈົ່ງ
ຖອດຖິ້ມສະພາບມະນຸດເກົ່າຂອງຕົນຊຶ່ງຄູ່ກັບວິຖີຊີວິດເດີມນັ້ນເສຍ ທີ່ກຳລັງເສື່ອມເສຍໄປສູ່
ຄວາມຕາຍຕາມຕັນຫາອັນເປັນທີ່ຫລອກລວງນັ້ນ. [23]ແລະຈົ່ງໃຫ້ວິນຍານຈິດຂອງທ່ານຖືກຊົງ
ຕັ້ງຂຶ້ນໃໝ່. [24]ແລະໃຫ້ທ່ານທັງຫລາຍສວມສະພາບມະນຸດໃໝ່ ຊຶ່ງຊົງສ້າງຂຶ້ນໃໝ່ຕາມແບບ
ລັກສະນະຂອງພຣະເຈົ້າ ໃນຄວາມຊອບທຳແລະຄວາມບໍລິສຸດທີ່ແທ້ຈິງ.

[25]ເຫດສັນນັ້ນທ່ານທັງຫລາຍຈົ່ງເລີກກ່າວຄຳຕົວະເສຍ "ທຸກຄົນຈົ່ງກ່າວຄວາມຈິງຕໍ່ເພື່ອນ
ບ້ານຂອງຕົນ" ເພາະວ່າເຮົາທັງຫລາຍເປັນອະໄວຍະວະຂອງກັນແລະກັນ. [26]ຈະຮ້າຍກໍຮ້າຍໄດ້
ແຕ່ຢ່າໃຫ້ຄວາມຮ້າຍເປັນເຫດໃຫ້ເກີດການຜິດບາບ ຢ່າຮ້າຍຢູ່ຈົນຕາເວັນຕົກ. [27]ແລະຢ່າປ່ອຍ
ໂອກາດໃຫ້ມານ. [28]ຝ່າຍຄົນຂີ້ລັກ, ຢ່າໄດ້ລັກຕໍ່ໄປ ແຕ່ໃຫ້ໃຊ້ມືອອກເຫື່ອແຮງຫາລ້ຽງຊີບໂດຍ
ທາງຊອບທຳດີກວ່າ ເພື່ອຈະມີສ່ວນເຫລືອພໍຈະແຈກໃຫ້ແກ່ຄົນຍາກຈົນ. [29]ຢ່າໃຫ້ຄຳຫຍາບຊ້າ
ອອກຈາກປາກຂອງພວກທ່ານຈັກເທື່ອ ແຕ່ໃຫ້ໃຊ້ຄຳດີຊຶ່ງເປັນປະໂຫຍດໃຫ້ຈະເລີນຂຶ້ນ ແລະ
ໃຫ້ເໝາະສົມກັບຄວາມຕ້ອງການ ເພື່ອຈະໄດ້ເປັນຄຸນປະໂຫຍດແກ່ຄົນທັງຫລາຍທີ່ໄດ້ຍິນໄດ້
ຟັງ. [30]ແລະຢ່າເຮັດໃຫ້ພຣະວິນຍານບໍລິສຸດຂອງພຣະເຈົ້າເສຍພຣະໄທ ເພາະໂດຍພຣະວິນ-
ຍານນັ້ນທ່ານທັງຫລາຍໄດ້ຖືກຊົງປະທັບຕາໝາຍໄວ້ ເພື່ອວັນທີ່ຈະຊົງໄຖ່ໃຫ້ພົ້ນ. [31]ສ່ວນໃຈ
ຂົມຂື່ນ, ໃຈໂມໂຫໂຫໂສ, ໃຈຄຽດຮ້າຍ, ການອຶກກະທຶກຜິດຖຽງກັນ, ການກ່າວສຽດສີກັນ,
ແລະການຄຶດປອງຮ້າຍທຸກຢ່າງ ຈົ່ງຖິ້ມໃຫ້ຫ່າງໄກຈາກທ່ານທັງຫລາຍເສຍ. [32]ຈົ່ງມີໃຈເມດຕາ
ຕໍ່ກັນ, ມີໃຈເອັນດູກັນ, ແລະອະໄພໂທດໃຫ້ກັນ ເໝືອນດັ່ງພຣະເຈົ້າໄດ້ຊົງໂຜດອະໄພໂທດໃຫ້
ແກ່ພວກທ່ານໃນອົງພຣະຄຣິດນັ້ນ.

# ບົດທີ 5

## ດຳເນີນຊີວິດຢ່າງຄົນທີ່ຢູ່ຝ່າຍຄວາມສະຫວ່າງ

1ເພາະສັນນັ້ນທ່ານທັງຫລາຍ ຈົ່ງເປັນຜູ້ດຳເນີນຊີວິດຕາມແບບຢ່າງ ພຣະເຈົ້າ ເໝືອນເປັນບຸດ
ທີ່ຮັກ. 2ແລະຈົ່ງດຳເນີນຊີວິດນັ້ນໃນຄວາມຮັກ ເໝືອນດັ່ງ ພຣະຄຣິດ ໄດ້ຊົງຮັກທ່ານທັງຫລາຍ
ແລະຊົງສະຫລະພຣະອົງເອງເພື່ອພວກເຮົາ ໃຫ້ເປັນເຄື່ອງບູຊາແລະເຄື່ອງຖວາຍທີ່ມີກິ່ນຫອມ
ຫວານແກ່ ພຣະເຈົ້າ. 3ແຕ່ການເອີ່ຍເຖິງການຫລິ້ນຊູ້, ການຊົ່ວຮ້າຍທຸກຢ່າງ, ຫລືຄວາມໂລພະ-
ຕັນຫາກໍດີ ຢ່າໃຫ້ມີຂຶ້ນໃນຖ້າມກາງທ່ານທັງຫລາຍ ເພື່ອຈະໄດ້ເໝາະສົມກັບພວກທ່ານເປັນໄພ່
ພົນຂອງ ພຣະເຈົ້າ. 4ທັງຢ່າກ່າວຄຳຫຍາບຊ້າ, ຢ່າເວົ້າຢ່າງບໍ່ມີແກ່ນສານ, ຫລືເວົ້າຕະຫລົກ
ຫລິ້ນ ຊຶ່ງເປັນການບໍ່ສົມຄວນ ແຕ່ໃຫ້ມີການຂອບພຣະຄຸນດີກວ່າ. 5ເພາະວ່າເລື່ອງນີ້ທ່ານທັງ-
ຫລາຍຄົງຮູ້ແນ່ວ່າ ຄົນຫລິ້ນຊູ້, ຄົນຊົ່ວຮ້າຍ ຄົນໂລພະຕັນຫາ (ທີ່ເປັນເໝືອນຄົນທີ່ໄຫວ້ພຣະ-
ທຽມ) ກໍດີ ຈະມີສ່ວນໃນລາຊະອານາຈັກຂອງ ພຣະຄຣິດ ແລະຂອງ ພຣະເຈົ້າບໍ່ໄດ້.

6ຢ່າໃຫ້ຜູ້ໃດລໍ້ລວງພວກທ່ານດ້ວຍຄຳເວົ້າອັນໄຮ້ປະໂຫຍດ ເພາະການເຮັດເຫລົ່ານີ້ແຫລະ,
ພຣະພິໂລດຂອງ ພຣະເຈົ້າ ຈຶ່ງຕົກໃສ່ຄົນທັງຫລາຍທີ່ບໍ່ຍອມເຊື່ອຟັງ. 7ເຫດສັນນັ້ນທ່ານທັງ-
ຫລາຍຢ່າຄົບຫາສະມາຄົມກັບຄົນເຫລົ່ານັ້ນຈັກເທື່ອ. 8ເພາະວ່າເມື່ອກ່ອນ, ທ່ານທັງຫລາຍຢູ່
ຝ່າຍຄວາມມືດ ແຕ່ບັດນີ້ກໍຢູ່ຝ່າຍຄວາມສະຫວ່າງໃນອົງ ພຣະຜູ້ເປັນເຈົ້າ ຈົ່ງດຳເນີນຊີວິດ
ເໝືອນຢູ່ຝ່າຍຄວາມສະຫວ່າງແລ້ວ. 9(ດ້ວຍວ່າ ຜົນຂອງ ພຣະວິນຍານ ນັ້ນຄືຄວາມດີ ແລະ
ຄວາມຊອບທຳກັບຄວາມຈິງທຸກຢ່າງ). 10ທ່ານທັງຫລາຍຈົ່ງພະຍາຍາມຮຽນຮູ້ຈັກວ່າ ເຮັດສິ່ງ
ໃດຈຶ່ງຈະເປັນທີ່ຊອບພຣະໄທອົງ ພຣະຜູ້ເປັນເຈົ້າ. 11ແລະຢ່າເຂົ້າສ່ວນກັບກິດຈະການຂອງ
ຄວາມມືດທີ່ບໍ່ມີປະໂຫຍດ ແຕ່ຈົ່ງເປີດເຜີຍກິດຈະການນັ້ນໃຫ້ປະກົດດີກວ່າ. 12ເພາະວ່າແມ່ນ
ແຕ່ຈະເວົ້າເຖິງການເຫລົ່ານັ້ນທີ່ເຂົາເຮັດໃນທີ່ລັບລີ້ກໍຍັງເປັນການໜ້າອາຍ. 13ແຕ່ເມື່ອສິ່ງສາ-
ລະພັດຖືກເປີດເຜີຍອອກໂດຍຄວາມສະຫວ່າງ ສິ່ງນັ້ນກໍປະກົດແຈ້ງ ເພາະວ່າທຸກສິ່ງທີ່ໃຫ້ປະ-
ກົດແຈ້ງກໍຄືຄວາມສະຫວ່າງ. 14ເຫດສັນນັ້ນຈຶ່ງມີຄຳກ່າວວ່າ,

> "ຄົນທີ່ນອນຫລັບເອີຍ, ຈົ່ງຕື່ນຂຶ້ນ
> ຈົ່ງຟື້ນຂຶ້ນມາຈາກຄວາມຕາຍ
> ແລະ ພຣະຄຣິດ ຈະສ່ອງສະຫວ່າງໃສ່ເຈົ້າ."[ກ]

15ເຫດສັນນັ້ນທ່ານທັງຫລາຍຈົ່ງລະວັງໃນການດຳເນີນຊີວິດໃຫ້ດີ ຢ່າໃຫ້ເໝືອນຄົນໄຮ້ປັນຍາ
ແຕ່ໃຫ້ເໝືອນຄົນມີປັນຍາ. 16ຈົ່ງສວຍເອົາໂອກາດ ເພາະວ່າທຸກວັນນີ້ເປັນຄາວຊົ່ວຮ້າຍ. 17ເຫດ
ສັນນັ້ນ ຢ່າເປັນຄົນໂງ່ ແຕ່ຈົ່ງເຂົ້າໃຈນໍ້າພຣະໄທຂອງອົງ ພຣະຜູ້ເປັນເຈົ້າ ວ່າເປັນຢ່າງໃດ.
18ແລະຢ່າເມົາເຫລົ້າແວງ ຊຶ່ງພາໃຫ້ເສຍຄົນ ແຕ່ຈົ່ງເຕັມດ້ວຍ ພຣະວິນຍານ ກໍດີກວ່າ. 19ຈົ່ງ
ສົນທະນາກັນດ້ວຍເພງສັນລະເສີນ, ເພງນະມັດສະການ, ແລະເພງຍ້ອງຍໍສໍລະເສີນຝ່າຍ ພຣະ-
ວິນຍານ ຄືຮ້ອງເພງແລະສັນລະເສີນຈາກໃຈຂອງທ່ານທັງຫລາຍຖວາຍແດ່ອົງ ພຣະຜູ້ເປັນເຈົ້າ.
20ຈົ່ງຂອບພຣະຄຸນ ພຣະເຈົ້າ ຄື ພຣະບິດາສຳລັບສິ່ງສາລະພັດສະເໝີ ໃນພຣະນາມຂອງ ພຣະ-

---

[ກ]ຂໍ້ຄວາມນີ້ແມ່ນຕອນໜຶ່ງແຕ່ບົດເພງຄຣິສະຕຽນແຕ່ເມື່ອທຳອິດພຸ້ນ.

ເຢຊູຄຣິດເຈົ້າຂອງເຮົາທັງຫລາຍ.

## ບັນດາສາມີແລະພັນລະຍາ

21ເນື່ອງດ້ວຍເຈົ້າມີຄວາມຢຳເກງ ພຣະຄຣິດ ຈົ່ງຍອມຟັງເຊິ່ງກັນແລະກັນ.
22ຝ່າຍພັນລະຍາ, ຈົ່ງຍອມຢູ່ໃຕ້ບັງຄັບສາມີຂອງຕົນ ເໝືອນຍອມຟັງອົງ ພຣະຜູ້ເປັນເຈົ້າ.
23ເພາະວ່າສາມີເປັນສີສະຂອງພັນລະຍາ ເໝືອນ ພຣະຄຣິດ ຊົງເປັນປະມຸກຂອງຄຣິສຕະຈັກ
ຊຶ່ງເປັນພຣະກາຍຂອງພຣະອົງ ແລະພຣະອົງຊົງເປັນຜູ້ໂຜດໃຫ້ຄຣິສຕະຈັກນັ້ນພົ້ນ. 24ຄຣິສ-
ຕະຈັກຍອມຢູ່ໃຕ້ບັງຄັບຂອງ ພຣະຄຣິດ ສັນໃດ ພັນລະຍາກໍຄວນຍອມຢູ່ໃຕ້ບັງຄັບສາມີຂອງຕົນ
ທຸກປະການສັນນັ້ນ. 25ຝ່າຍສາມີ, ຈົ່ງຮັກພັນລະຍາຂອງຕົນ ເໝືອນດັ່ງ ພຣະຄຣິດ ໄດ້ຊົງຮັກ
ຄຣິສຕະຈັກ ແລະຊົງສະຫລະພຣະອົງເອງເພື່ອຄຣິສຕະຈັກ. 26ເພື່ອຊົງຕັ້ງຄຣິສຕະຈັກນັ້ນໄວ້
ສຳລັບ ພຣະເຈົ້າ ໂດຍການຊົງຊຳລະດ້ວຍນ້ຳກັບດ້ວຍຖ້ອຍຄຳ.[ກ] 27ເພື່ອພຣະອົງນັ້ນຈະໄດ້ຮັບ
ຄຣິສຕະຈັກສຳລັບພຣະອົງເອງ ຄືຄຣິສຕະຈັກທີ່ມີສະຫງ່າລາສີ, ບໍ່ມີຈຸດດ່າງພອຍຫລືຮອຍໜັງ
ຫ່ຽວ, ແລະສິ່ງອື່ນໆ ໃນທຳນອງນັ້ນ ເພື່ອຄຣິສຕະຈັກຈະບໍລິສຸດບໍ່ມີຕຳໜິ. 28ຢ່າງນັ້ນແຫລະ,
ສາມີຈຶ່ງຄວນຮັກພັນລະຍາຂອງຕົນເໝືອນກັບຮັກກາຍຂອງຕົນເອງ ຜູ້ທີ່ຮັກພັນລະຍາຂອງຕົນກໍ
ຮັກຕົນເອງ. 29ເພາະວ່າບໍ່ມີຜູ້ໃດກຽດຊັງເນື້ອກາຍຂອງຕົນເອງຈັກເທື່ອ ມີແຕ່ບຳລຸງຖະໜອມ
ລ້ຽງໄວ້ ເໝືອນດັ່ງ ພຣະຄຣິດ ຊົງກະທຳແກ່ຄຣິສຕະຈັກ. 30ເພາະວ່າເຮົາທັງຫລາຍເປັນອະໄວ
ຍະວະແຫ່ງພຣະກາຍຂອງພຣະອົງ. 31"ເພາະເຫດນີ້ຜູ້ຊາຍຈຶ່ງຈະລະບິດາມານດາຂອງຕົນໄປ
ຜູກພັນກັບພັນລະຍາ ແລະເຂົາທັງສອງຈະເປັນກາຍອັນດຽວກັນ." 32ຄວາມຈິງທີ່ຝັງຢູ່ໃນຂໍ້ນີ້ກໍ
ເລິກເຊິ່ງ ແຕ່ສ່ວນຂ້າພະເຈົ້າ, ເຂົ້າໃຈວ່າໝາຍເຖິງ ພຣະຄຣິດ ແລະຄຣິສຕະຈັກ. 33ເຖິງຢ່າງໃດ
ກໍດີ, ພວກທ່ານທຸກຄົນຈົ່ງຮັກພັນລະຍາຂອງຕົນເໝືອນຮັກຕົນເອງ ແລະພັນລະຍາກໍຈົ່ງຢຳເກງ
ສາມີຂອງຕົນ.

# ບົດທີ 6

## ລະບຽບລະຫວ່າງບຸດແລະບິດາມານດາ

1ຝ່າຍບຸດທັງຫລາຍ, ຈົ່ງນົບນ້ອມເຊື່ອຟັງບິດາມານດາຂອງຕົນ ເພາະເຫັນແກ່ອົງ ພຣະຜູ້-
ເປັນເຈົ້າ ເພາະເຮັດແນວນັ້ນເປັນການຖືກຕ້ອງ. 2"ຈົ່ງນັບຖືບິດາມານດາຂອງຕົນ" ນີ້ເປັນ
ພຣະບັນຍັດຂໍ້ຕົ້ນທີ່ມີພຣະສັນຍາໄວ້ດ້ວຍ. 3ຄື "ເພື່ອເຈົ້າຈະຢູ່ເຢັນເປັນສຸກແລະມີອາຍຸໝັ້ນຍືນທີ່
ແຜ່ນດິນນີ້."
4ຝ່າຍພວກທ່ານທີ່ເປັນບິດາ, ຢ່າຮົບກວນບຸດຂອງຕົນໃຫ້ຂັດເຄືອງໃຈ ແຕ່ຈົ່ງອົບຮົມເຂົາ
ດ້ວຍການຕີສອນແລະການເຕືອນສະຕິຕາມຫລັກຄຳສອນຂອງອົງ ພຣະຜູ້ເປັນເຈົ້າ.

## ລະບຽບລະຫວ່າງຂ້ອຍຂ້າແລະນາຍ

5ຝ່າຍພວກຂ້ອຍຂ້າ, ຈົ່ງເຊື່ອຟັງຄວາມນາຍຝ່າຍໂລກດ້ວຍຄວາມຢຳເກງຈົນຕົວສັ່ນ ດ້ວຍ
ນ້ຳໃສໃຈຈິງເໝືອນດັ່ງຝ່າຍ ພຣະຄຣິດ. 6ບໍ່ເໝືອນກັບບາງຄົນທີ່ເຮັດແຕ່ຢູ່ຕໍ່ໜ້າ, ຢ່າງຄົນທີ່ເຮັດ

[ກ]ຄືຄຳກ່າວໃນພິທີບັບຕິສະມາ.

ໃຫ້ຊອບໃຈມະນຸດ ແຕ່ຈົ່ງເຮັດເໝືອນຢ່າງຂ້ອຍຂ້າຂອງ ພຣະຄຣິດ ຄື ເຮັດຕາມຊອບພຣະໄທ
ພຣະເຈົ້າດ້ວຍຄວາມເຕັມໃຈ. 7ຈົ່ງຮັບໃຊ້[ກ] ນາຍດ້ວຍໃຈຊື່ນບານ ເໝືອນກັບຮັບໃຊ້ອົງ ພຣະ-
ຜູ້ເປັນເຈົ້າ ບໍ່ໃຊ່ເໝືອນຮັບໃຊ້ມະນຸດ. 8ເພາະພວກທ່ານຮູ້ຢູ່ແລ້ວວ່າຜູ້ໃດເຮັດການດີປະການ
ໃດ ຜູ້ນັ້ນກໍຈະໄດ້ຮັບບຳເໜັດຢ່າງນັ້ນຈາກອົງ ພຣະຜູ້ເປັນເຈົ້າ ບໍ່ວ່າເຂົາຈະເປັນຂ້ອຍຂ້າຫລື
ເປັນອິດສະຫລະກໍດີ.

9ຝ່າຍນາຍກໍຈົ່ງເຮັດຕໍ່ຂ້ອຍຂ້າຂອງຕົນໃນທຳນອງດຽວກັນ ຄືຢ່າຂູ່ເຂັນເຂົາ ເພາະພວກທ່ານ
ກໍຮູ້ແລ້ວວ່າ ພຣະອົງຜູ້ຊົງເປັນນາຍຂອງເຂົາແລະຂອງທ່ານທັງຫລາຍນັ້ນຢູ່ໃນສະຫວັນ ແລະ
ພຣະອົງບໍ່ຊົງເລືອກໜ້າຜູ້ໃດ.

## ຍຸດທະພັນທັງຊຸດຊຶ່ງມາຈາກພຣະເຈົ້າ

10ສຸດທ້າຍນີ້, ຂໍພວກທ່ານຈົ່ງມີກຳລັງເພີ່ມຂຶ້ນໃນອົງ ພຣະຜູ້ເປັນເຈົ້າ ແລະໃນລິດເດດອັນ
ແກ່ກ້າຂອງພຣະອົງ. 11ຈົ່ງສວມຍຸດທະພັນຄົບຊຸດຊຶ່ງມາຈາກ ພຣະເຈົ້າ ເພື່ອທ່ານທັງຫລາຍຈະ
ສາມາດຢືນຕໍ່ສູ້ກັບກົນອຸບາຍຂອງພະຍາມານໄດ້. 12ເພາະວ່າເຮົາທັງຫລາຍບໍ່ໄດ້ຕໍ່ສູ້ກັບມະນຸດ
ທຳມະດາ ແຕ່ຕໍ່ສູ້ກັບຜູ້ປົກຄອງ, ຜູ້ມີອຳນາດ, ເຈົ້າໂລກທີ່ຢູ່ໃນໂມຫະຄວາມມືດແຫ່ງໂລກນີ້
ແລະຕໍ່ສູ້ກັບກຳລັງວິນຍານຝ່າຍຄວາມຊົ່ວຮ້າຍໃນອາກາດສະຖານ. 13ເຫດສັນນັ້ນຈົ່ງຮັບເອົາ
ຍຸດທະພັນຄົບຊຸດຊຶ່ງມາຈາກ ພຣະເຈົ້າ ເພື່ອທ່ານທັງຫລາຍຈະສາມາດຕໍ່ຕ້ານໃນວັນຊົ່ວຮ້າຍ
ນັ້ນ ແລະເມື່ອເຮັດແລ້ວຈະຢູ່ຢ່າງໝັ້ນຄົງໄດ້. 14ເຫດສັນນັ້ນທ່ານທັງຫລາຍຈົ່ງຢືນໝັ້ນ ເອົາ
ຄວາມຈິງຄາດແອວໄວ້ເອົາຄວາມຊອບທຳເປັນເຄື່ອງປ້ອງກັນເອິກໄວ້. 15ແລະເອົາຄວາມພັ່ງ-
ພ້ອມຝ່າຍຂ່າວປະເສີດເລື່ອງສັນຕິສຸກມາສຸບໃສ່ຕີນ. 16ແລະພ້ອມກັບສິ່ງທັງໝົດນີ້, ຈົ່ງຍົກເອົາ
ຄວາມເຊື່ອເປັນເຂນ ດ້ວຍເຂນນັ້ນ ທ່ານທັງຫລາຍຈະສາມາດດັບລູກສອນໄຟທັງໝົດຂອງຜູ້
ຮ້າຍນັ້ນໃຫ້ດັບມອດເສຍ. 17ຈົ່ງເອົາຄວາມພົ້ນເປັນເຄື່ອງຄຸມປ້ອງກັນຫົວໄວ້ ແລະຈົ່ງຖືພຣະ-
ແສງຂອງ ພຣະວິນຍານ ຄືພຣະທຳຂອງ ພຣະເຈົ້າ. 18ຈົ່ງອ້ອນວອນແລະໄຫວ້ວອນທຸກຢ່າງ
ຈົ່ງອ້ອນວອນໂດຍ ພຣະວິນຍານ ທຸກເວລາ ແລະຈົ່ງເຝົ້າລະວັງໃນການນັ້ນດ້ວຍຄວາມພຽນທຸກ
ຢ່າງ ຈົ່ງອ້ອນວອນເພື່ອໄພ່ພົນທັງປວງຂອງ ພຣະເຈົ້າ. 19ແລະອ້ອນວອນສຳລັບຂ້າພະເຈົ້າ
ດ້ວຍ ເພື່ອຈະຊົງໂຜດໃຫ້ຂ້າພະເຈົ້າເກີດໃຈກ້າຫານ ອອກປາກສະແດງຂໍ້ລັບເລິກເລື່ອງຂ່າວ
ປະເສີດ. 20(ຍ້ອນຂ່າວປະເສີດນີ້ແຫລະ, ຂ້າພະເຈົ້າຈຶ່ງເປັນລາຊະທູດຜູ້ຕິດໂສ້ຢູ່) ເພື່ອຂ້າພະ-
ເຈົ້າຈະເລົ່າຂ່າວປະເສີດນັ້ນດ້ວຍໃຈກ້າຫານ ຕາມທີ່ຂ້າພະເຈົ້າຄວນຈະກ່າວ.

## ຄຳສະແດງຄວາມຄຶດເຖິງໃນຕອນທ້າຍ

21ບັດນີ້, ເພື່ອໃຫ້ທ່ານທັງຫລາຍຮູ້ເຫດການທັງປວງຂອງຂ້າພະເຈົ້າວ່າ ຂ້າພະເຈົ້າເປັນຢູ່
ຢ່າງໃດ ຕີຂີໂກ, ຜູ້ເປັນນ້ອງທີ່ຮັກແລະເປັນຜູ້ທີ່ປະຕິບັດທີ່ສັດຊື່ໃນອົງ ພຣະຜູ້ເປັນເຈົ້າ ຈະໄດ້
ບອກໃຫ້ທ່ານທັງຫລາຍຮູ້ເຖິງ ເຫດການທັງປວງຂອງຂ້າພະເຈົ້າ. 22ຂ້າພະເຈົ້າໄດ້ໃຫ້ຜູ້ນີ້ໄປຫາ
ພວກທ່ານ ກໍເພາະການນີ້ແຫລະ, ຄືເພື່ອພວກທ່ານໄດ້ຮູ້ເຖິງຄວາມເປັນຢູ່ຂອງຂ້າພະເຈົ້າ ແລະ
ເພື່ອໃຫ້ເພິ່ນໜຸນນ້ຳໃຈພວກທ່ານ.

---

[ກ]ພາສາເດີມວ່າ "ເຮັດວຽກຂ້ອຍຂ້າຮັບໃຊ້."

23ຂໍໃຫ້ພວກພີ່ນ້ອງໄດ້ຮັບສັນຕິສຸກແລະຄວາມຮັກດ້ວຍຄວາມເຊື່ອ ມາຈາກພຣະບິດາເຈົ້າ
ແລະຈາກພຣະເຢຊູຄຣິດເຈົ້າ. 24ຂໍໃຫ້ພຣະຄຸນຈົ່ງສະຖິດຢູ່ນຳບັນດາຄົນທັງປວງທີ່ຮັກພຣະ-
ເຢຊູຄຣິດເຈົ້າ ຂອງພວກເຮົາຢ່າງບໍ່ຮູ້ເສື່ອມສູນ.

* * *

# ຈົດໝາຍຂອງໂປໂລ ທີ່ຂຽນໄປເຖິງຄຣິສຕະຈັກໃນເມືອງ ຟີລິບປອຍ

## ບົດທີ 1

[1]ໂປໂລ ແລະ ຕີໂມທຽວ ຜູ້ຮັບໃຊ້[ກ] ຂອງ ພຣະເຢຊູຄຣິດ, ເຖິງ ພວກໄພ່ພົນຂອງ ພຣະເຈົ້າ
ໃນ ພຣະເຢຊູຄຣິດ ທີ່ຢູ່ໃນເມືອງ ຟີລິບປອຍ ທັງບັນດາຜູ້ດູແລແລະຜູ້ບົວລະບັດ. [2]ຂໍພຣະຄຸນ
ແລະສັນຕິສຸກຈາກ ພຣະບິດາ ເຈົ້າຂອງພວກເຮົາ ແລະຈາກ ພຣະເຢຊູຄຣິດ ເຈົ້າ ຈົ່ງມີແກ່ເຈົ້າ
ທັງຫລາຍເທີນ.

### ຄຳອ້ອນວອນຂອງໂປໂລເພື່ອຄຣິສະຕຽນທີ່ເມືອງຟີລິບປອຍ

[3]ເຮົາລະນຶກເຖິງ ເຈົ້າທັງຫລາຍ ເມື່ອໃດ ເຮົາກໍໄດ້ຂອບພຣະຄຸນ ພຣະເຈົ້າ ຂອງເຮົາທຸກເທື່ອ.
[4]ແລະທຸກເວລາທີ່ເຮົາອ້ອນວອນຂໍເພື່ອພວກເຈົ້າ ເຮົາກໍທູນຂໍດ້ວຍໃຈຍິນດີ. [5]ເພາະເຫດທີ່ເຈົ້າ
ທັງຫລາຍໄດ້ມີສ່ວນໃນງານຂ່າວປະເສີດດ້ວຍກັນ ຕັ້ງແຕ່ວັນຕົ້ນນັ້ນແລະຕໍ່ມາຈົນເຖິງບັດນີ້.
[6]ເຮົາແນ່ໃຈວ່າພຣະອົງຜູ້ຊົງຕັ້ງຕົ້ນການດີໄວ້ໃນພວກເຈົ້າແລ້ວ ຄົງຈະຊົງກະທຳໃຫ້ສຳເລັດຈົນ
ເຖິງ ວັນ ແຫ່ງ ພຣະເຢຊູຄຣິດ. [7]ການ ທີ່ ເຮົາ ຄຶດ ເຖິງ ເຈົ້າ ທັງຫລາຍ ດັ່ງນັ້ນ ກໍ ສົມຄວນ ຢູ່ ແລ້ວ
ເພາະວ່າເຮົາມີໃຈຮັກພວກເຈົ້າທຸກຄົນ ເຈົ້າທັງຫລາຍໄດ້ຮັບສ່ວນຮ່ວມໃນພຣະຄຸນດ້ວຍກັນກັບ
ເຮົາ ໃນການທີ່ເຮົາຖືກຈຳຈອງ ແລະໃນການກ່າວປ້ອງກັນໃຫ້ຂ່າວປະເສີດນັ້ນໃຫ້ຕັ້ງໝັ້ນຄົງຢູ່.
[8]ເພາະວ່າ ພຣະເຈົ້າ ຊົງ ເປັນພະຍານຝ່າຍເຮົາວ່າ ເຮົາເປັນຫ່ວງເຈົ້າທັງຫລາຍພຽງໃດຕາມພຣະ-
ໄທ ເມດຕາຂອງ ພຣະເຢຊູຄຣິດ. [9]ແລະ ເຮົາອ້ອນວອນຂໍ ໃຫ້ຄວາມຮັກຂອງພວກ ເຈົ້າຈະເລີນ
ຫລາຍຂຶ້ນສະເໝີ ພ້ອມກັບຄວາມຮູ້ແລະຄວາມສັງເກດທຸກຢ່າງ. [10]ເພື່ອເຈົ້າທັງຫລາຍຈະສັງ-
ເກດໄດ້ວ່າ ສິ່ງໃດປະເສີດທີ່ສຸດ ແລະເພື່ອພວກເຈົ້າຈະໄດ້ເປັນຄົນບໍລິສຸດ ແລະບໍ່ມີທີ່ຕິໄດ້ໃນ
ວັນແຫ່ງ ພຣະເຢຊູຄຣິດ. [11]ຈະໄດ້ເປັນຜູ້ບໍລິສຸດດ້ວຍຜົນຂອງຄວາມຊອບທຳ ຊຶ່ງເກີດຂຶ້ນດ້ວຍ
ພຣະເຢຊູຄຣິດ ເພື່ອຖວາຍພຣະກຽດແລະຄວາມສັນລະເສີນແກ່ພຣະເຈົ້າ.

### ຊີວິດຂອງເຮົາກໍຊອບຢູ່ໃນພຣະຄຣິດ

[12]ພີ່ນ້ອງທັງຫລາຍເອີຍ, ເຮົາປາດຖະໜາໃຫ້ເຈົ້າທັງຫລາຍຮູ້ວ່າ ເຫດການທີ່ເກີດຂຶ້ນແກ່ເຮົາ
ນັ້ນກໍກັບເປັນເຫດໃຫ້ຂ່າວປະເສີດແຜ່ກວ້າງອອກໄປ. [13]ຈົນປະກົດທົ່ວໄປໃນໝູ່ຜູ້ຄຸມແລະຄົນ
ອື່ນໆ ວ່າການຈຳຈອງທີ່ເຮົາຖືກນັ້ນກໍເພື່ອ ພຣະຄຣິດ. [14]ພວກພີ່ນ້ອງສ່ວນຫລາຍໄດ້ເກີດມີ
ຄວາມໄວ້ໃຈໃນອົງ ພຣະຜູ້ເປັນເຈົ້າ ເພາະການຈຳຈອງຂອງເຮົານັ້ນ ແລະພວກເຂົາມີໃຈກ້າຂຶ້ນ
ຢ່າງລົ້ນເຫລືອ ທີ່ຈະກ່າວພຣະທຳຂອງ ພຣະເຈົ້າ ໂດຍບໍ່ມີຄວາມຢ້ານ.

[15]ຄວາມຈິງ, ມີລາງຄົນປະກາດເລື່ອງ ພຣະຄຣິດ ດ້ວຍໃຈອິດສາແລະຜິດຖຽງກັນ ແຕ່ກໍມີຄົນ
ອື່ນທີ່ປະກາດດ້ວຍໃຈຫວັງດີ. [16]ພວກນີ້ແຫລະ, ປະກາດດ້ວຍໃຈຮັກໂດຍຮູ້ແລ້ວວ່າ ຊົງຕັ້ງເຮົາ

[ກ]ພາສາເດີມວ່າ "ຂ້ອຍຂ້າ."

ໄວ້ໃຫ້ກ່າວປ້ອງກັນຂ່າວປະເສີດນັ້ນໄວ້. 17ແຕ່ພວກອື່ນປະກາດຂ່າວ ພຣະຄຣິດ ດ້ວຍການແຂ່ງ
ດີກັນ ບໍ່ໃຊ່ດ້ວຍໃຈສຸດຈະລິດ ແຕ່ຈິງໃຈຈະເພີ່ມຄວາມທຸກລຳບາກໃຫ້ເຮົາເມື່ອເຮົາຖືກຈຳຈອງ.

18ຖ້າຢ່າງນັ້ນແລ້ວຈະເປັນປະການໃດ ເຖິງແມ່ນວ່າເຂົາຈະປະກາດ ພຣະຄຣິດ ດ້ວຍປະການ
ໃດກໍຕາມ ຈະເປັນດ້ວຍການແກ້ງເຮັດຫລືໃຈຈິງກໍດີ ແຕ່ເຂົາກໍຍັງປະກາດເລື່ອງ ພຣະຄຣິດ ໃນ
ການນີ້ເຮົາກໍມີຄວາມຍິນດີ ແລະຄົງຈະມີຄວາມຍິນດີຕໍ່ໄປ. 19ເພາະເຮົາຮູ້ວ່າໂດຍການອ້ອນ-
ວອນຂອງເຈົ້າທັງຫລາຍ ແລະໂດຍການຊ່ອຍເຫລືອຈາກ ພຣະວິນຍານ ຂອງ ພຣະເຢຊູຄຣິດ
ການນີ້ຈະເປັນເຫດໃຫ້ເຮົາເຖິງການປົດປ່ອຍ. 20ເພາະເປັນຄວາມມຸ້ງມາດປາດຖະໜາ ແລະ
ຄວາມຫວັງຂອງເຮົາ ເຮົາຈະບໍ່ມີຄວາມລະອາຍໃນສິ່ງໃດເລີຍ ແຕ່ເມື່ອກ່ອນທຸກເທື່ອມີໃຈກ້າ
ສະເໝີສັນໃດ ບັດນີ້ກໍຂໍໃຫ້ເປັນຢ່າງດຽວກັນສັນນັ້ນ ພຣະຄຣິດ ຈະຊົງຮັບພຣະກຽດຕິຍົດໃນ
ຮ່າງກາຍຂອງເຮົາສະເໝີເຖິງແມ່ນເຮົາຈະມີຊີວິດຢູ່ຫລືຕາຍກໍຕາມ. 21ເພາະວ່າຖ້າເຮົາມີຊີວິດ
ພຣະຄຣິດ ເປັນຊີວິດນັ້ນ ຖ້າເຮົາຕາຍກໍເປັນປະໂຫຍດແກ່ເຮົາ. 22ຖ້າຈະຍັງມີຊີວິດຢູ່ໃນຮ່າງ-
ກາຍນີ້ ເຮົາກໍເຮັດການງານໃຫ້ເກີດຜົນ ແຕ່ເຮົາບອກບໍ່ໄດ້ວ່າຈະເລືອກເອົາອັນໃດດີ. 23ເຮົາລັງ
ເລໃຈຢູ່ໃນລະຫວ່າງສອງຝ່າຍນີ້ ຄື ວ່າເຮົາມີຄວາມປາດຖະໜາທີ່ຈະຈາກໄປເພື່ອຢູ່ກັບ ພຣະ-
ຄຣິດ ຊຶ່ງປະເສີດຫລາຍກວ່າ. 24ແຕ່ການທີ່ເຮົາຍັງມີຊີວິດຢູ່ໃນຮ່າງກາຍນີ້ ກໍເປັນສິ່ງສຳຄັນສຳ-
ລັບພວກເຈົ້າຫລາຍກວ່ານັ້ນອີກ. 25ເມື່ອເຮົາແນ່ໃຈຢ່າງນີ້ແລ້ວເຮົາກໍຮູ້ວ່າ ເຮົາຍັງຈະຢູ່ກັບເຈົ້າ
ທັງຫລາຍ ເພື່ອໃຫ້ພວກເຈົ້າຈະເລີນຂຶ້ນແລະຊົມຊື່ນຍິນດີໃນຄວາມເຊື່ອ. 26ເພື່ອຄວາມພາກພູມ
ໃຈຂອງເຈົ້າທັງຫລາຍເພາະດ້ວຍເຮົານັ້ນ ຈະທະວີຫລາຍຂຶ້ນໃນ ພຣະເຢຊູຄຣິດ ເພາະເຫດທີ່
ເຮົາຈະມາຫາພວກເຈົ້າອີກ.

27ຂໍແຕ່ພຽງໃຫ້ເຈົ້າທັງຫລາຍດຳເນີນຊີວິດໃຫ້ສົມກັບຂ່າວປະເສີດເລື່ອງ ພຣະຄຣິດ ເພື່ອວ່າ
ຖ້າເຮົາມາຫາພວກເຈົ້າຫລືບໍ່ມາກໍຕາມ ເຮົາກໍຈະໄດ້ຍິນຂ່າວຂອງພວກເຈົ້າວ່າ ເຈົ້າທັງຫລາຍຕັ້ງ
ໝັ້ນຄົງຢູ່ເປັນນ້ຳໜຶ່ງໃຈດຽວ, ຕໍ່ສູ້ເໝືອນຢ່າງເປັນຄົນດຽວເພື່ອຄວາມເຊື່ອອັນເກີດຈາກຂ່າວ
ປະເສີດນັ້ນ. 28ແລະພວກເຈົ້າບໍ່ຢ້ານກົວຜູ້ທີ່ຂັດຂວາງແຕ່ປະການໃດຈັກເທື່ອ ເມື່ອເປັນດັ່ງນີ້ກໍ
ຈະເປັນຫລັກຖານໃຫ້ເຂົາຮູ້ຈັກຄັກວ່າເຂົາຈະເຖິງຄວາມຈິບຫາຍ ແຕ່ຝ່າຍເຈົ້າທັງຫລາຍກໍຄົງຈະ
ເຖິງຄວາມພົ້ນ ແລະການນັ້ນກໍເປັນມາຈາກ ພຣະເຈົ້າ. 29ເພາະ ພຣະເຈົ້າ ໄດ້ຊົງໂຜດແກ່ເຈົ້າ
ທັງຫລາຍເພາະເຫັນແກ່ພຣະຄຣິດ ບໍ່ໃຊ່ໃຫ້ພວກເຈົ້າເຊື່ອໃນພຣະອົງເທົ່ານັ້ນ ແຕ່ໃຫ້ພວກເຈົ້າ
ທົນຄວາມທຸກເພາະເຫັນແກ່ພຣະອົງດ້ວຍ. 30ຄືໃຫ້ເຈົ້າທັງຫລາຍຕໍ່ສູ້ຢ່າງດຽວກັບທີ່ພວກເຈົ້າໄດ້
ເຫັນເຮົາຕໍ່ສູ້ແລ້ວນັ້ນ ແລະສິ່ງພວກເຈົ້າໄດ້ຍິນວ່າເຮົາກຳລັງຕໍ່ສູ້ຢູ່ໃນຂະນະນີ້.

# ບົດທີ 2

## ການທີ່ພຣະຄຣິດຊົງຖ່ອມພຣະອົງລົງແລະຊົງຖືກຍົກຂຶ້ນ

1ເຫດສັນນັ້ນຖ້າຊີວິດໄດ້ໃນ ພຣະຄຣິດ ອຳນວຍການຊູກຳລັງໃຈ, ຖ້າມີຄວາມເລົ້າໂລມໃຈ
ປະການໃດໃນຄວາມຮັກ, ຖ້າມີສ່ວນຮ່ວມໃຈກັບ ພຣະວິນຍານປະການໃດ, ຖ້າມີຄວາມເມດຕາ
ເອັນດູປະການໃດ. 2ກໍຂໍໃຫ້ເຈົ້າທັງຫລາຍເຮັດໃຫ້ຄວາມຍິນດີຂອງເຮົາຄົບເຕັມ ດ້ວຍການທີ່ມີ

ຄວາມຄຶດຢ່າງດຽວກັນ, ມີຄວາມຮັກຢ່າງດຽວກັນ, ມີໃຈຮ່ວມສາມັກຄີເປັນນໍ້າໜຶ່ງໃຈດຽວກັນ.
3ຢ່າເຮັດສິ່ງໃດໃນທາງຊີງດີຫລືຖືດີກັນ ແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນ. 4ຢ່າໃຫ້ຜູ້ໃດ
ເຫັນແກ່ປະໂຫຍດຂອງຕົນຝ່າຍດຽວ ແຕ່ຈົ່ງເຫັນແກ່ປະໂຫຍດຂອງຄົນອື່ນດ້ວຍ. 5ເຈົ້າທັງ-
ຫລາຍຈົ່ງມີນໍ້າໃຈຕໍ່ກັນເໝືອນຢ່າງທີ່ມີໃນ ພຣະເຢຊູຄຣິດ.

6 ພຣະອົງຊົງສະພາບຂອງ ພຣະເຈົ້າ
ແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບ ພຣະເຈົ້າ ນັ້ນ
ເປັນສິ່ງທີ່ຕ້ອງຍຶດຫວງໄວ້.
7 ແຕ່ໄດ້ກັບຊົງຍອມສະຫລະ
ແລະຊົງຮັບສະພາບຂ້ອຍຂ້າ
ຊົງຖືກຳເນີດເປັນມະນຸດ.
8 ແລະເມື່ອຊົງປະກົດພຣະອົງໃນສະພາບມະນຸດແລ້ວ
ພຣະອົງກໍຊົງຖ່ອມພຣະອົງລົງ
ຍອມເຊື່ອຟັງຈົນເຖິງມໍລະນາ
ຄືເຖິງຄວາມມໍລະນາທີ່ໄມ້ກາງແຂນ.
9 ເຫດສັນນັ້ນ ພຣະເຈົ້າ ຈຶ່ງໄດ້ຊົງຍົກພຣະອົງຂຶ້ນເຖິງທີ່ສູງສຸດ
ແລະໄດ້ຊົງປະທານພຣະນາມນັ້ນ
ຊຶ່ງຢູ່ເໜືອນາມທັງປວງໃຫ້ແກ່ພຣະອົງ.
10 ເພື່ອເພາະພຣະນາມນັ້ນທຸກຫົວເຂົ່າ ໃນສະຫວັນ,
ເທິງແຜ່ນດິນໂລກ, ແລະໃຕ້ພື້ນດິນກໍດີ
ຈະໄດ້ຄຸລົງຂາບ ພຣະເຢຊູ.
11 ເພື່ອທຸກລີ້ນຈະຍອມຮັບວ່າ
"ພຣະເຢຊູ ຊົງເປັນອົງ ພຣະຜູ້ເປັນເຈົ້າ"
ອັນເປັນການຖວາຍພຣະກຽດແກ່ ພຣະບິດາ ເຈົ້າ.

## ສ່ອງແຈ້ງເໝືອນດວງສະຫວ່າງຕ່າງໆ ໃນໂລກ

12ເຫດສັນນີ້ພວກທີ່ຮັກຂອງເຮົາເອີຍ, ເໝືອນດັ່ງເຈົ້າທັງຫລາຍເຄີຍເຊື່ອຟັງທຸກເວລາສັນໃດ
ພວກເຈົ້າຈົ່ງອົດສາພະຍາຍາມດ້ວຍຄວາມຢຳເກງແລະຕົວສັ່ນ ເພື່ອໃຫ້ໄດ້ຄວາມພົ້ນສັນນັ້ນ ບໍ່
ໃຊ່ຈຳເພາະ ເມື່ອ ເຮົາຢູ່ນຳພວກ ເຈົ້າ ເທົ່ານັ້ນ ແຕ່ຈົ່ງ ເຮັດຫລາຍກວ່ານັ້ນອີກ ເມື່ອ ເຮົາບໍ່ຢູ່ນຳ.
13ເພາະວ່າ ແມ່ນ ພຣະເຈົ້າ ເປັນຜູ້ຊົງກະທຳການຢູ່ພາຍໃນ ເຈົ້າທັງຫລາຍ ໃຫ້ມີໃຈປາດຖະໜາ
ແລະໃຫ້ເຮັດໄປເພື່ອຊອບພຣະໄທຂອງພຣະອົງ. 14ຈົ່ງເຮັດທຸກສິ່ງໂດຍບໍ່ມີການຈົ່ມແລະຖົກຖຽງ
ກັນ. 15ເພື່ອເຈົ້າທັງຫລາຍຈະບໍ່ຖືກຕິຕຽນແລະບໍ່ມີຄວາມຜິດ, ເປັນບຸດຂອງ ພຣະເຈົ້າ ທີ່ບໍ່ມີຕຳໜິ
ໃນຖ້າມກາງເຊື້ອຊາດອັນຄົດໂກງແລະຊົ່ວຊ້າ ເຈົ້າທັງຫລາຍຈົ່ງປະກົດໃນຖ້າມກາງເຂົາເໝືອນ
ດັ່ງດວງສະຫວ່າງຕ່າງໆ ທີ່ສ່ອງແຈ້ງໃນໂລກ. 16ຄືສະແດງພຣະທຳອັນປະກອບດ້ວຍຊີວິດ
ເພື່ອເຮົາຈະມີບ່ອນອວດໄດ້ໃນວັນຂອງ ພຣະຄຣິດ ວ່າ ເຮົາບໍ່ໄດ້ແລ່ນແລະບໍ່ໄດ້ເຮັດການໜັກ-

ໜ່ວງເປັນການເສຍປະໂຫຍດ. [17]ເຖິງແມ່ນວ່າເຮົາຕ້ອງຖືກຖອກລົງໃຫ້ຄືບເຄື່ອງບູຊາ ຊຶ່ງເຈົ້າ
ທັງຫລາຍໄດ້ຖວາຍດ້ວຍຄວາມເຊື່ອນັ້ນ ເຮົາກໍຍິນດີແລະຊົມຊື່ນຍິນດີຮ່ວມກັບເຈົ້າທັງປວງ.
[18]ຊຶ່ງເຈົ້າທັງຫລາຍກໍຄວນຈະຍິນດີດ້ວຍກັນກັບເຮົາ ແລະຊົມຊື່ນດ້ວຍຢ່າງດຽວກັນ.

## ຕີໂມທຽວແລະເອປາໂຟດີໂຕ

[19]ເຮົາຫວັງໃຈໃນ ພຣະເຢຊູເຈົ້າ ວ່າ ໃນບໍ່ຊ້ານີ້ເຮົາຈະໃຫ້ຕີໂມທຽວໄປຫາພວກເຈົ້າເພື່ອເຮົາ
ຈະໄດ້ຮັບຄວາມຊູໃຈເມື່ອໄດ້ຮັບຂ່າວຂອງເຈົ້າທັງຫລາຍ. [20]ເຮົາບໍ່ມີຜູ້ໃດທີ່ມີນໍ້າໃຈເໝືອນຕີໂມ-
ທຽວ ຜູ້ເປັນຄົນເອົາໃຈໃສ່ໃນຄວາມສຸກທຸກຂອງພວກເຈົ້າໂດຍແທ້. [21]ເພາະວ່າຄົນອື່ນໆ ຍ່ອມ
ສະແຫວງຫາຜົນປະໂຫຍດສ່ວນຕົວ ບໍ່ສະແຫວງຫາປະໂຫຍດຂອງ ພຣະເຢຊູຄຣິດ. [22]ແຕ່ເຈົ້າ
ທັງຫລາຍກໍຮູ້ເຖິງຄຸນຄ່າຂອງຕີໂມທຽວດີແລ້ວວ່າ ເພິ່ນໄດ້ຮັບໃຊ້[ກ] ຮ່ວມກັບເຮົາໃນການປະຕິ-
ບັດຂ່າວປະເສີດເໝືອນລູກຮັບໃຊ້ພໍ່. [23]ເຫດສັນນັ້ນພໍຈະເຫັນໄດ້ວ່າ ມີອັນໃດຈະເກີດຂຶ້ນກັບເຮົາ
ເຮົາຫວັງໃຈວ່າເມື່ອນັ້ນຈະໃຊ້ເພິ່ນໄປໂລດ. [24]ແລະເຮົາໄວ້ໃຈໃນອົງ ພຣະຜູ້ເປັນເຈົ້າ ວ່າ ໃນບໍ່
ຊ້ານີ້ເຮົາເອງຈະມາຫາພວກເຈົ້າເໝືອນກັນ.

[25]ເຮົາຄຶດເຫັນວ່າ ຈຳເປັນຕ້ອງໃຫ້ເອປາໂຟດີໂຕ ນ້ອງຊາຍຂອງເຮົາ ກັບຄືນໄປຫາເຈົ້າທັງ-
ຫລາຍ ທ່ານຜູ້ນີ້ເປັນເພື່ອນຮ່ວມງານແລະເປັນເພື່ອນທະຫານດ້ວຍກັນກັບເຮົາ ແລະເປັນຜູ້ຮັບ
ໃຊ້ທີ່ພວກເຈົ້າໃຫ້ມາບົວລະບັດເຮົາໃນຍາມຂັດສົນ. [26]ດ້ວຍວ່າເພິ່ນເປັນຫ່ວງຄຶດເຖິງພວກເຈົ້າ
ຫລາຍ ແລະເນື່ອງຈາກພວກເຈົ້າໄດ້ຍິນຂ່າວວ່າເພິ່ນບໍ່ສະບາຍນັ້ນ ເພິ່ນກໍທຸກໃຈ. [27]ຄວາມຈິງ,
ເພິ່ນກໍບໍ່ສະບາຍແລະເກືອບຕາຍໄປແທ້ ແຕ່ພຣະເຈົ້າຊົງພຣະກະລຸນາໂຜດເອົາເພິ່ນໄວ້ ແລະບໍ່
ແມ່ນຊົງໂຜດແກ່ເພິ່ນຄົນດຽວ ແຕ່ຊົງໂຜດເຮົາດ້ວຍ ເພື່ອບໍ່ໃຫ້ເຮົາມີຄວາມທຸກຊ້ອນທຸກ.
[28]ເຫດສັນນັ້ນ ເຮົາຈຶ່ງຟ້າວໃຊ້ເພິ່ນໄປ ເພື່ອໃຫ້ເຈົ້າທັງຫລາຍມີຄວາມຍິນດີເມື່ອໄດ້ເຫັນເພິ່ນອີກ
ແລະຄວາມທຸກຂອງເຮົາກໍຈະໄດ້ເບົາບາງລົງ. [29]ເຫດສັນນັ້ນຈົ່ງຕ້ອນຮັບເພິ່ນໄວ້ໃນອົງ ພຣະຜູ້-
ເປັນເຈົ້າ ດ້ວຍເຕັມໃຈຍິນດີ ແລະຈົ່ງນັບຖືທຸກຄົນທີ່ເປັນຄົນຢ່າງດຽວກັບເພິ່ນ. [30]ເພາະເພິ່ນ
ເກືອບຈະສິ້ນຊີວິດເສຍ ເນື່ອງຈາກການປະຕິບັດງານຂອງ ພຣະຄຣິດ ຄືເພິ່ນໄດ້ສ່ຽງຊີວິດຂອງ
ຕົນ ເພື່ອການປະຕິບັດທີ່ບົກພ່ອງຂອງພວກເຈົ້າຕໍ່ເຮົານັ້ນຈະໄດ້ເຕັມບໍລິບູນ.

# ບົດທີ 3

## ຄວາມຊອບທຳອັນແທ້ຈິງ

[1]ສຸດທ້າຍນີ້ ຂໍໃຫ້ພວກພີ່ນ້ອງຂອງເຮົາຊົມຊື່ນຍິນດີໃນອົງ ພຣະຜູ້ເປັນເຈົ້າ ເທີ້ນ ການທີ່ເຮົາ
ຂຽນຊໍ້າຂໍ້ຄວາມເຫລົ່ານີ້ເຖິງເຈົ້າທັງຫລາຍ ກໍບໍ່ເປັນການລຳບາກແກ່ເຮົາດອກ ແຕ່ເປັນການ
ປອດໄພແກ່ພວກເຈົ້າ.

[2]ຈົ່ງລະວັງພວກໝາ ຈົ່ງລະວັງພວກຄົນທີ່ເຮັດຊົ່ວ ຈົ່ງລະວັງພວກຖືການປາດເນື້ອເຖືອ
ໜັງ.[ຂ] [3]ເພາະວ່າເຮົາທັງຫລາຍເປັນພວກທີ່ຖືພິທີຕັດແທ້, ເປັນຜູ້ນະມັດສະການ ພຣະເຈົ້າ ດ້ວຍ

---

[ກ]ພາສາເດີມວ່າ “ໄດ້ເຮັດການເປັນຂ້ອຍຂ້າ.”

[ຂ]ໝາຍເຖິງຝ່າຍພິທີຕັດດ້ວຍເວົ້າຢ່າງດູຖູກ. [ຂ]ຫລືວ່າ “ດ້ວຍພຣະວິຫານຂອງພຣະເຈົ້າ.”

ຈິດວິນຍານ[2] ແລະເອົາພຣະເຢຊູຄຣິດມາອວດ ແລະບໍ່ໄດ້ໄວ້ໃຈໃນຝ່າຍມະນຸດ. 4ເຖິງແມ່ນ
ວ່າເຮົາມີເຫດທີ່ຈະໄວ້ໃຈໃນຝ່າຍມະນຸດກໍຕາມ ຖ້າຄົນອື່ນນຶກວ່າຕົນເອງມີເຫດຜົນທີ່ຈະໄວ້ໃຈ
ໃນຝ່າຍມະນຸດນັ້ນ ເຮົາກໍມີຫລາຍກວ່າເຂົາອີກ. 5ຄືເມື່ອເຮົາເກີດມາໄດ້ແປດວັນເຮົາກໍໄດ້ຮັບພິທີ
ຕັດ, ເຮົາເປັນຊາດອິສຣາເອນ ແຕ່ກະກຸນເບັນຢາມິນ, ເປັນຄົນເຮັບເຣີເກີດຈາກຊາວເຮັບເຣີ,
ໃນດ້ານພຣະບັນຍັດເຮົາກໍຢູ່ໃນຄະນະຟາຣີຊາຍ. 6ໃນດ້ານໃຈຮ້ອນຮົນເຮົາກໍໄດ້ຂົ່ມເຫງຄຣິສ-
ຕະຈັກ, ໃນດ້ານຄວາມຊອບທຳຊຶ່ງມີຢູ່ໂດຍພຣະບັນຍັດ ເຮົາກໍບໍ່ມີສິ່ງທີ່ຕິຕຽນໄດ້. 7ແຕ່ວ່າສິ່ງ
ໃດເປັນຄຸນປະໂຫຍດແກ່ເຮົາ ເຮົາຖືສິ່ງນັ້ນວ່າເປັນອັນໄຮ້ບໍ່ມີປະໂຫຍດແກ່ເຮົາແລ້ວ ເພາະ
ເຫັນແກ່ພຣະຄຣິດ. 8ທີ່ຈິງ, ເຮົາຖືວ່າສິ່ງສາລະພັດເປັນຂອງໄຮ້ປະໂຫຍດ ເພາະເຫັນແກ່ສິ່ງທີ່
ມີຄຸນຄ່າຫລາຍເຫລືອລົ້ນກວ່ານັ້ນອີກ ຄື ການຮູ້ເຖິງພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າຂອງ
ເຮົາ ເພາະເຫດພຣະອົງນັ້ນ, ເຮົາຈຶ່ງໄດ້ຍອມສະຫລະສິ່ງສາລະພັດ ແລະຖືວ່າສິ່ງເຫລົ່ານັ້ນເປັນ
ເໝືອນຂີ້ເຫຍື້ອເພື່ອຈະໄດ້ອົງພຣະຄຣິດມາເປັນປະໂຫຍດແກ່ເຮົາ. 9ແລະຈະໄດ້ປະກົດຢູ່ໃນ
ພຣະອົງໂດຍບໍ່ມີຄວາມຊອບທຳໃນເຮົາເອງ ຊຶ່ງໄດ້ມາໂດຍພຣະບັນຍັດ ແຕ່ມີມາໂດຍຄວາມ
ເຊື່ອໃນພຣະຄຣິດ ເປັນຄວາມຊອບທຳທີ່ມາຈາກພຣະເຈົ້າ ຊຶ່ງອາໃສຄວາມເຊື່ອ. 10ເຮົາຕ້ອງ-
ການຈະໄດ້ຮູ້ຈັກພຣະອົງ, ແລະຮູ້ຈັກລິດອຳນາດອັນປະກົດໃນການທີ່ພຣະອົງຊົງຄືນພຣະຊົນ
ແລະຮ່ວມທຸກກັບພຣະອົງ ຄືຍອມຮັບຄວາມຕາຍເໝືອນຢ່າງພຣະອົງ. 11ເພື່ອຖ້າເປັນໄປໄດ້ເຮົາ
ກໍຈະໄດ້ເປັນຂຶ້ນມາຈາກຄວາມຕາຍດ້ວຍ.

## ບາກບັ່ນມຸ້ງໜ້າໄປສູ່ຫລັກໄຊ

12ບໍ່ໃຊ້ວ່າເຮົາໄດ້ຮັບແລ້ວ ຫລືວ່າເຖິງທີ່ສຳເລັດແລ້ວ ແຕ່ເຮົາກຳລັງບາກບັ່ນມຸ້ງໜ້າໄປ ເພື່ອ
ຈະໄດ້ຮັບເອົາມາເປັນຂອງຕົນ ເໝືອນດັ່ງພຣະເຢຊູຄຣິດໄດ້ຊົງຮັບເຮົາໄວ້ເປັນຂອງພຣະອົງ
ແລ້ວ. 13ພີ່ນ້ອງທັງຫລາຍເອີຍ, ເຮົາບໍ່ຖືວ່າເຮົາໄດ້ຮັບແລ້ວ ແຕ່ເຮົາເຮັດຢ່າງໜຶ່ງ ຄືລືມສິ່ງ
ເຫລົ່ານັ້ນທີ່ຜ່ານພົ້ນໄປແລ້ວເສຍ ແລະໂນ້ມຕົວອອກໄປຫາສິ່ງທັງຫລາຍທີ່ຢູ່ເບື້ອງໜ້າ. 14ເຮົາ
ກຳລັງບາກບັ່ນມຸ້ງໜ້າໄປສູ່ຫລັກໄຊເພື່ອຈະໄດ້ຮັບລາງວັນ ຄືຊີວິດຊຶ່ງພຣະເຈົ້າໄດ້ຊົງເອີ້ນເອົາ
ໃນພຣະເຢຊູຄຣິດ ໃຫ້ໄປຮັບຢູ່ເບື້ອງເທິງ. 15ເຮົາທັງປວງຊຶ່ງເປັນຜູ້ໃຫຍ່ຖ້ວນແລ້ວ ຄວນຄຶດ
ຢ່າງນັ້ນ ແລະຖ້າເຈົ້າທັງຫລາຍຄຶດຢ່າງອື່ນ ພຣະເຈົ້າກໍຈະຊົງສະແດງສິ່ງນັ້ນແກ່ພວກເຈົ້າ
ດ້ວຍ. 16ແຕ່ພວກເຮົາເຖິງຍ່ານໃດແລ້ວ ກໍໃຫ້ພວກເຮົາດຳເນີນຊື່ໄປຕາມນັ້ນ.

17ພີ່ນ້ອງທັງຫລາຍເອີຍ, ຈົ່ງພາກັນເຮັດຕາມແບບຢ່າງຂອງເຮົາ ແລະຄອຍເບິ່ງຄົນເຫລົ່ານັ້ນ
ທີ່ເຮັດຕາມແບບຢ່າງດຽວກັນ ເໝືອນດັ່ງເຈົ້າທັງຫລາຍໄດ້ເອົາພວກເຮົາເປັນຕົວຢ່າງແລ້ວ.
18ເພາະວ່າມີຫລາຍຄົນທີ່ດຳເນີນຊີວິດເປັນສັດຕູຕໍ່ໄມ້ກາງແຂນຂອງພຣະຄຣິດ ຊຶ່ງເຮົາໄດ້ບອກ
ເລື່ອງນີ້ແກ່ພວກເຈົ້າຫລາຍເທື່ອແລ້ວ ແລະບັດນີ້ຍັງບອກເຈົ້າອີກດ້ວຍນ້ຳຕາໄຫລ. 19ປາຍທາງ
ຂອງຄົນເຫລົ່ານັ້ນຄືຄວາມຈິບຫາຍ ພະຂອງເຂົາກໍຄືທ້ອງເຂົາເອງ ເຂົາຍົກເອົາການທີ່ໜ້າອັບ-
ອາຍຂຶ້ນມາໂອ້ອວດ ເຂົາສົນໃຈໃນວັດຖຸຝ່າຍໂລກ. 20ແຕ່ບ້ານເມືອງຂອງເຮົາທັງຫລາຍນັ້ນຢູ່
ໃນສະຫວັນ ພວກເຮົາລໍຄອຍພຣະຜູ້ໂຜດໃຫ້ພົ້ນ ຊຶ່ງຈະສະເດັດມາຈາກສະຫວັນ ຄືພຣະເຢຊູ-
ຄຣິດເຈົ້າ. 21ພຣະອົງຈະຊົງປ່ຽນແປງຮ່າງກາຍອັນຕ່ຳຕ້ອຍຂອງພວກເຮົາ ໃຫ້ເປັນເໝືອນພຣະ-

ກາຍອັນຊົງສະຫງ່າລາສີຂອງພຣະອົງ ດ້ວຍລິດທານຸພາບຊຶ່ງເຮັດໃຫ້ພຣະອົງຊົງປາບສາລະພັດ
ລົງໃຕ້ບັງຄັບຂອງພຣະອົງ.

# ບົດທີ 4

## ຈົ່ງຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າ

1ເຫດສັນນັ້ນພວກພີ່ນ້ອງທີ່ຮັກຂອງເຮົາ ຜູ້ເປັນທີ່ປາດຖະໜາ, ເປັນທີ່ຍິນດີ ແລະເປັນພວງ-
ມາໄລຂອງເຮົາ ພວກທີ່ຮັກຂອງເຮົາເອີຍ, ຈົ່ງຕັ້ງໝັ້ນຄົງຢູ່ໃນອົງພຣະຜູ້ເປັນເຈົ້າ.
2ເຮົາຂໍເຕືອນນາງຢູໂອເດຍ ແລະຂໍເຕືອນນາງຊິນຕີເຂ ໃຫ້ມີໃຈປອງດອງກັນໃນອົງພຣະຜູ້-
ເປັນເຈົ້າ. 3ເຮົາຂໍຮ້ອງເຈົ້າຜູ້ເປັນເພື່ອນຮ່ວມແອກຂອງເຮົາແທ້ໆ ໃຫ້ເຈົ້າຊ່ອຍຜູ້ຍິງເຫລົ່ານັ້ນ
ເພາະເຂົາໄດ້ຮ່ວມງານຝ່າຍຂ່າວປະເສີດກັບເຮົາແລະ ເກລເມນໂຕ ພ້ອມກັບຄົນອື່ນທີ່ເປັນເພື່ອນ
ຮ່ວມງານຂອງເຮົາ ຊຶ່ງຊື່ຂອງພວກເຂົານັ້ນມີຢູ່ໃນທະບຽນແຫ່ງຊີວິດແລ້ວ. 4ຈົ່ງຊົມຊື່ນຍິນດີໃນ
ອົງພຣະຜູ້ເປັນເຈົ້າທຸກເວລາ ເຮົາຂໍຢ້ຳອີກວ່າ ຈົ່ງຊົມຊື່ນຍິນດີເທີນ. 5ຈົ່ງໃຫ້ໃຈອ່ອນສຸພາບ
ຂອງເຈົ້າທັງຫລາຍປະກົດແກ່ຄົນທັງປວງ ອົງພຣະຜູ້ເປັນເຈົ້າຊົງຢູ່ໃກ້ແລ້ວ.[ກ] 6ຢ່າທຸກຮ້ອນ-
ໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເລື່ອງຄວາມປາດຖະໜາຂອງພວກເຈົ້າທຸກຢ່າງຕໍ່ພຣະເຈົ້າ
ດ້ວຍການໄຫວ້ວອນ, ແລະການອ້ອນວອນຂໍ, ພ້ອມກັບການຂອບພຣະຄຸນ. 7ແລ້ວສັນຕິສຸກອັນ
ມາແຕ່ພຣະເຈົ້າຊຶ່ງທີ່ເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄຶດຂອງເຈົ້າທັງຫລາຍ
ໄວ້ໃນພຣະເຢຊູຄຣິດ.
8ພີ່ນ້ອງທັງຫລາຍເອີຍ, ໃນທີ່ສຸດນີ້, ສິ່ງໃດທີ່ສັດຈິງ, ສິ່ງໃດທີ່ໜ້ານັບຖື, ສິ່ງໃດທີ່ຍຸດຕິທຳ,
ສິ່ງໃດທີ່ບໍລິສຸດ, ສິ່ງໃດທີ່ໜ້າຮັກ, ສິ່ງໃດທີ່ໜ້າຍິນດີ, ສິ່ງໃດທີ່ລ້ຳເລີດ ແລະຖ້າມີສິ່ງໃດທີ່ຄວນ
ແກ່ການສັນລະເສີນ ຈົ່ງພິຈາລະນາເຖິງສິ່ງເຫລົ່ານັ້ນ. 9ຈົ່ງເຮັດທຸກສິ່ງທີ່ພວກເຈົ້າໄດ້ຮຽນຮູ້,
ໄດ້ຮັບໄວ້, ໄດ້ຍິນ, ແລະໄດ້ເຫັນໃນເຮົາແລ້ວ ແລະພຣະເຈົ້າຜູ້ໂຜດປະທານສັນຕິສຸກຈະຊົງ
ສະຖິດຢູ່ນຳເຈົ້າທັງຫລາຍ.

## ຕອບເລື່ອງຂອງຝາກຈາກຊາວຟີລິບປອຍ

10ເຮົາມີໃຈຊື່ນຍິນດີຢ່າງຫລວງຫລາຍໃນອົງພຣະຜູ້ເປັນເຈົ້າ ເພາະວ່າໃນທີ່ສຸດນີ້ພວກເຈົ້າ
ໄດ້ຫວນລະນຶກເຖິງເຮົາອີກ[ຂ] ຄວາມຈິງ, ເຈົ້າທັງຫລາຍກໍເຄີຍຄຶດເຖິງເຮົາຢູ່ ແຕ່ຍັງບໍ່ມີໂອ-
ກາດທີ່ຈະສະແດງ. 11ເຮົາບໍ່ໄດ້ຈົ່ມເຖິງເລື່ອງການຂັດສົນເພາະເຮົາຈະມີຖານະຢ່າງໃດກໍຕາມ
ເຮົາກໍຮຽນຮູ້ແລ້ວທີ່ຈະພໍໃຈຢູ່ຢ່າງນັ້ນ. 12ເຮົາຮູ້ຈັກທີ່ຈະປະສົບກັບການຕົກຕ່ຳ ແລະຮູ້ຈັກທີ່ຈະ
ປະສົບກັບຄວາມອຸດົມສົມບູນ ບໍ່ວ່າໃນກໍລະນີໃດໆ ເຮົາໄດ້ຮຽນຮູ້ເຖິງແງ່ຄວາມລັບ ທີ່ຈະປະ-
ສົບກັບຄວາມອີ່ມທ້ອງແລະຄວາມອຶດຢາກ, ຄວາມສົມບູນພູນສຸກແລະຄວາມຂັດສົນ. 13ເຮົາ
ສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກຳລັງເຮົາ. 14ເຖິງປານນັ້ນກໍເປັນຄວາມກະລຸນາ
ຂອງເຈົ້າທັງຫລາຍ ທີ່ໄດ້ຮ່ວມທຸກກັບເຮົາ,
15ແຕ່ພວກເຈົ້າ ຊາວຟີລິບປອຍ, ກໍຊາບຢູ່ແລ້ວວ່າ ໃນຂັ້ນຕົ້ນຂອງການປະກາດຂ່າວປະ-

[ກ]ຫລືວ່າ “ຈວນຈະສະເດັດມາ.” [ຂ]ພາສາເດີມວ່າ “ພວກເຈົ້າໃຫ້ການຄຶດຮອດເຮົານັ້ນບານອອກໃໝ່.”

ເສີດນັ້ນ ແມ່ນຕອນເມື່ອເຮົາໄດ້ຈາກແຂວງມາເກໂດເນຍໄປ ບໍ່ມີຄຣິສຕະຈັກໃດໄດ້ມີສ່ວນຮ່ວມ
ກັບເຮົາໃນລາຍໄດ້ລາຍຈ່າຍ ນອກຈາກພວກເຈົ້າພວກດຽວເທົ່ານັ້ນ. [16]ເມື່ອເຮົາຢູ່ເມືອງເທຊະ-
ໂລນິກ ພວກເຈົ້າໄດ້ຝາກຂອງມາຊ່ອຍເຮົາກວ່າເທື່ອໜຶ່ງ. [17]ບໍ່ໃຊ້ວ່າເຮົາປາດຖະໜາຈະໄດ້ຮັບ
ຂອງທານຈາກເຈົ້າທັງຫລາຍ ແຕ່ເຮົາປາດຖະໜາຢາກໃຫ້ພວກເຈົ້າໄດ້ຜົນກຳໄລເພີ່ມຂຶ້ນໃນ
ບັນຊີຂອງພວກເຈົ້າ. [18]ເຮົາໄດ້ຮັບຄົບຈຳນວນແລະມີບໍລິບູນຢູ່ແລ້ວ ເຮົາກໍອີ່ມເຕັມຢູ່ເພາະໄດ້
ຮັບຂອງຈາກທ່ານເອປາໂຟດີໂຕ ຊຶ່ງເຈົ້າທັງຫລາຍສົ່ງໄປ ໃຫ້ເປັນຂອງທານທີ່ມີກິ່ນຫອມ
ຫວານ, ເປັນເຄື່ອງບູຊາທີ່ຊົງໂຜດຮັບ ແລະເປັນທີ່ຊອບພຣະໄທພຣະເຈົ້າ. [19]ແລະພຣະເຈົ້າ
ຂອງເຮົາຈະຊົງໂຜດປະທານສາລະພັດທີ່ພວກເຈົ້າຂາດຢູ່ນັ້ນ ຈາກຊັບອັນຮຸ່ງເຮືອງຂອງພຣະອົງ
ໃນພຣະເຢຊູຄຣິດ. [20]ຂໍໃຫ້ພຣະກຽດຕິຍົດຈົ່ງມີແກ່ພຣະເຈົ້າ ຄືພຣະບິດາຂອງເຮົາທັງຫລາຍ
ສືບໆ ໄປເປັນນິດ ອາແມນ.

## ສະແດງຄວາມຄຶດເຖິງໃນຕອນທ້າຍ

[21]ເຮົາຂໍຝາກຄວາມຄຶດເຖິງມາຍັງພວກໄພ່ພົນຂອງພຣະເຈົ້າທຸກຄົນໃນພຣະເຢຊູຄຣິດ ພີ່-
ນ້ອງທັງຫລາຍທີ່ຢູ່ກັບເຮົາ ກໍຝາກຄວາມຄຶດເຖິງມາຍັງເຈົ້າທັງຫລາຍດ້ວຍ. [22]ໄພ່ພົນທັງປວງ
ຂອງພຣະເຈົ້າ ກໍຝາກຄວາມຄຶດເຖິງມາຍັງເຈົ້າທັງຫລາຍ ເປັນຕົ້ນວ່າພວກທີ່ຢູ່ໃນພະລາຊະວັງ
ຂອງກາຍຊາ. [23]ຂໍໃຫ້ພຣະຄຸນຂອງພຣະເຢຊູຄຣິດເຈົ້າ ຈົ່ງສະຖິດຢູ່ກັບຈິດວິນຍານຂອງເຈົ້າ
ທັງຫລາຍເທີ້ນ ອາແມນ.

* * *

# ຈົດໝາຍຂອງໂປໂລ ທີ່ມີໄປເຖິງຄຣິສຕະຈັກໃນເມືອງ ໂກໂລຊາຍ

## ບົດທີ 1

[1]ໂປໂລ ອັກຄະສາວົກຂອງ ພຣະເຢຊູຄຣິດ ຕາມນ້ຳພຣະໄທຂອງ ພຣະເຈົ້າ ກັບ ຕີໂມທຽວ
ນ້ອງຊາຍຂອງເຮົາ. ເຖິງ ພວກໄພ່ພົນຂອງ ພຣະເຈົ້າ ແລະພວກພີ່ນ້ອງທີ່ເຫລື້ອມໃສສັດທາໃນ
ພຣະຄຣິດທີ່ເມືອງ ໂກໂລຊາຍ [2]ຂໍໃຫ້ພຣະຄຸນແລະສັນຕິສຸດຊຶ່ງມາຈາກ ພຣະບິດາ ເຈົ້າຂອງເຮົາ
ທັງຫລາຍ ແລະ ພຣະຄຣິດ ເຈົ້າ ຈົ່ງສະຖິດຢູ່ນຳເຈົ້າທັງຫລາຍເທີນ.

### ຄຳອ້ອນວອນຂອງໂປໂລເພື່ອຄຣິສະຕຽນຊາວໂກໂລຊາຍ

[3]ເມື່ອເຮົາອ້ອນວອນ ເພື່ອເຈົ້າທັງຫລາຍ ເຮົາກໍຂອບພຣະຄຸນ ພຣະບິດາ ເຈົ້າຂອງ ພຣະເຢຊູ-
ຄຣິດ ເຈົ້າຂອງ ເຮົາທັງຫລາຍຢູ່ສະເໝີ. [4]ເພາະພວກເຮົາໄດ້ຍິນ ເຖິງຄວາມ ເຊື່ອຂອງ ເຈົ້າທັງ-
ຫລາຍໃນ ພຣະເຢຊູຄຣິດ ແລະເລື່ອງຄວາມຮັກຊຶ່ງພວກເຈົ້າມີຕໍ່ໄພ່ພົນທັງປວງຂອງ ພຣະເຈົ້າ.
[5]ໂດຍເຫດຊຶ່ງມີຄວາມຫວັງທີ່ຊົງຮັກສາໄວ້ສຳລັບເຈົ້າທັງຫລາຍໃນສະຫວັນ ຊຶ່ງເມື່ອກ່ອນພວກ
ເຈົ້າເຄີຍໄດ້ຍິນມາແລ້ວໃນຄຳອັນສັດຈິງ ຄືຂ່າວປະເສີດນັ້ນ. [6]ຊຶ່ງແຜ່ຜາຍມາເຖິງເຈົ້າທັງຫລາຍ
ຕາມທີ່ກຳລັງ ເກີດຜົນ ແລະທະວີຂຶ້ນທົ່ວ ໂລກ ຢ່າງດຽວກັບກຳລັງ ເປັນຢູ່ໃນຖ້າມກາງ ເຈົ້າທັງ-
ຫລາຍດ້ວຍ ຕັ້ງແຕ່ວັນທີ່ພວກເຈົ້າໄດ້ຍິນແລະໄດ້ເຂົ້າໃຈໃນພຣະຄຸນຂອງ ພຣະເຈົ້າ ຕາມຄວາມ
ຈິງ. [7]ດັ່ງທີ່ເຈົ້າທັງຫລາຍໄດ້ຮຽນຮູ້ຈາກ ເອປາຟາ ຜູ້ເປັນເພື່ອນຮ່ວມງານ[ກ] ທີ່ຮັກຂອງພວກ
ເຮົາ ເພິ່ນເປັນຜູ້ປະຕິບັດອົງ ພຣະຄຣິດ ແທນເຮົາດ້ວຍໃຈສັດຊື່. [8]ເພິ່ນໄດ້ເລົ່າໃຫ້ເຮົາຟັງເຖິງ
ຄວາມຮັກ ຊຶ່ງ ພຣະວິນຍານ ຊົງປະທານແກ່ເຈົ້າທັງຫລາຍດ້ວຍ.

[9]ເພາະເຫດນີ້, ນັບຕັ້ງແຕ່ວັນທີ່ເຮົາໄດ້ຍິນ ເຮົາກໍບໍ່ໄດ້ຢຸດໃນການອ້ອນວອນເພື່ອພວກເຈົ້າ
ທັງຫລາຍ ທູນຂໍເພື່ອໃຫ້ພວກເຈົ້າປະກອບເຕັມໄປດ້ວຍຄວາມຮູ້ເຖິງນ້ຳພຣະໄທຂອງພຣະອົງ,
ໃນສັບພຣະປັນຍາແລະຄວາມເຂົ້າໃຈຊຶ່ງມາຈາກ ພຣະວິນຍານ. [10]ເພື່ອເຈົ້າທັງຫລາຍຈະໄດ້ດຳ-
ເນີນຊີວິດຢ່າງທີ່ຄວນຕໍ່ອົງ ພຣະຜູ້ເປັນເຈົ້າ ແລະເປັນທີ່ຊອບພຣະໄທພຣະອົງຢ່າງແທ້ຈິງ, ໃຫ້
ເກີດຜົນໃນການດີທຸກຢ່າງ ແລະຈະເລີນຂຶ້ນໃນຄວາມຮູ້ເຖິງ ພຣະເຈົ້າ. [11]ຂໍໃຫ້ເຈົ້າທັງຫລາຍມີ
ກຳລັງແຂງແຮງຂຶ້ນທຸກຢ່າງ ໂດຍລິດເດດອັນຮຸ່ງເຮືອງຂອງພຣະອົງ ເພື່ອຈະສາມາດອົດທົນ
ທຸກສິ່ງ ແລະມີຄວາມໝັ້ນພຽນດ້ວຍຄວາມຍິນດີ. [12]ຈົ່ງຂອບພຣະຄຸນ ພຣະບິດາ ຜູ້ຊົງບັນດານ
ໃຫ້ເຈົ້າທັງຫລາຍສົມກັບທີ່ຈະເຂົ້າສ່ວນ ໄດ້ຮັບມໍລະດົກດ້ວຍກັນກັບໄພ່ພົນໃນຄວາມສະຫວ່າງ.
[13]ພຣະອົງໄດ້ຊົງ ໂຜດດຶງ ເຮົາທັງຫລາຍໃຫ້ພົ້ນຈາກອຳນາດຂອງຄວາມມືດ ແລະໄດ້ຊົງໂຍກ
ຍ້າຍພວກເຮົາໄປຕັ້ງໄວ້ໃນລາຊະອານາຈັກແຫ່ງ ພຣະບຸດ ທີ່ຮັກຂອງພຣະອົງ. [14]ໃນ ພຣະບຸດ
ນັ້ນເຮົາທັງຫລາຍຈຶ່ງໄດ້ຮັບການໄຖ່ໃຫ້ພົ້ນ ຄືຊົງໂຜດຍົກຜິດບາບທັງຫລາຍຂອງພວກເຮົາ.

---

[ກ]ພາສາເດີມວ່າ "ຜູ້ເປັນຂ້ອຍຂ້າເພື່ອນດ້ວຍກັນ."

## ຄວາມສົມບູນຂອງພຣະຄຣິດ

15 ພຣະອົງຊົງເປັນແບບລັກສະນະຂອງ ພຣະເຈົ້າ ຜູ້ຊຶ່ງຕາເຫັນບໍ່ໄດ້,
ຊົງເປັນບຸດແຣກເໜືອສາລະພັດທີ່ໄດ້ຊົງນິລະມິດສ້າງຂຶ້ນນັ້ນ.
16 ເພາະວ່າໃນພຣະອົງພຣະເຈົ້າ ໄດ້ຊົງສ້າງສັບພະທຸກສິ່ງຂຶ້ນ
ທັງໃນທ້ອງຟ້າແລະເທິງແຜ່ນດິນໂລກ, ສິ່ງທີ່ຕາເຫັນໄດ້ແລະທີ່ເຫັນບໍ່ໄດ້,
ຈະເປັນພຣະທີ່ນັ່ງຫລືລິດທານຸພາບ, ເປັນຜູ້ປົກຄອງຫລືຜູ້ມີອຳນາດ,
ສິ່ງທັງປວງເຫລົ່ານີ້ແມ່ນ ພຣະເຈົ້າ ໄດ້ສ້າງໂດຍທາງພຣະອົງແລະສຳລັບພຣະອົງ.
17 ພຣະອົງຊົງເປັນຢູ່ກ່ອນສິ່ງສາລະພັດ
ແລະສິ່ງສາລະພັດນັ້ນເປັນລະບຽບຢູ່ໂດຍພຣະອົງ.
18 ພຣະອົງຊົງເປັນສີສະຂອງພຣະກາຍ ຄື ຄຣິສຕະຈັກ ພຣະອົງຊົງເປັນປະຖົມ,
ເປັນຜູ້ແຮກທີ່ຖືກຊົງບັນດານໃຫ້ຄືນມາຈາກຕາຍ
ເພື່ອພຣະອົງຈະຊົງເປັນເອກໃນສັບພະສິ່ງທັງປວງ.
19 ເພາະວ່າ ພຣະບິດາ ຊົງພໍພຣະໄທ
ທີ່ຈະໃຫ້ສະພາບຂອງ ພຣະເຈົ້າ ສະຖິດຢູ່ໃນ ພຣະບຸດ ຢ່າງເຕັມບໍລິບູນ.
20 ແລະໂດຍ ພຣະບຸດ ນັ້ນຈະຊົງເຮັດໃຫ້ສິ່ງສາລະພັດກັບຄືນດີກັບ ພຣະເຈົ້າ
ບໍ່ວ່າສິ່ງນັ້ນຈະຢູ່ໃນແຜ່ນດິນໂລກຫລືໃນສະຫວັນ
ພຣະອົງໄດ້ບັນດານໃຫ້ເກີດສັນຕິພາບດ້ວຍພຣະໂລຫິດ
ຊຶ່ງໄຫລທີ່ໄມ້ກາງແຂນຂອງພຣະອົງ.

21ແລະເຈົ້າທັງຫລາຍ, ຊຶ່ງເມື່ອກ່ອນນັ້ນບໍ່ແມ່ນພົນລະເມືອງຂອງ ພຣະເຈົ້າ ແຕ່ເປັນສັດຕູ
ທາງດ້ານຈິດໃຈດ້ວຍການຊົ່ວຮ້າຍຕ່າງໆ. 22ບັດນີ້ພຣະອົງຊົງໂຜດໃຫ້ຄືນດີກັບພຣະອົງ ໂດຍ
ການສິ້ນພຣະຊົນແຫ່ງພຣະກາຍ ຄືເນື້ອໜັງຂອງພຣະອົງ ເພື່ອຈະໄດ້ຊົງຖວາຍພວກເຈົ້າຕໍ່
ພຣະພັກ ພຣະເຈົ້າ ໃຫ້ເປັນຄົນບໍລິສຸດທີ່ບໍ່ມີຕຳໜິຕິຕຽນໄດ້. 23ແຕ່ເຈົ້າທັງຫລາຍຕ້ອງຕັ້ງໝັ້ນຢູ່
ໃນຄວາມເຊື່ອ ຊຶ່ງໄດ້ວາງຮາກລົງຢ່າງແໜ້ນໜາຖາວອນແລ້ວ ແລະຢ່າໄດ້ໜີຈາກຄວາມໄວ້
ວາງໃຈໃນຂ່າວປະເສີດທີ່ພວກເຈົ້າໄດ້ຍິນແລ້ວ, ແລະໄດ້ປະກາດແລ້ວແກ່ມະນຸດທຸກຄົນທີ່ຢູ່ທົ່ວ
ໃຕ້ຟ້າ ຊຶ່ງເຮົາ, ໂປໂລ, ເປັນຜູ້ຮັບໃຊ້ໃນການປະກາດຂ່າວປະເສີດນັ້ນ.

## ການຮັບໃຊ້ຂອງໂປໂລຕໍ່ຄຣິສຕະຈັກ

24ບັດນີ້ເຮົາມີຄວາມຍິນດີໃນການທີ່ໄດ້ຮັບຄວາມທຸກເພື່ອເຈົ້າທັງຫລາຍ ສ່ວນການທົນທຸກ
ຂອງ ພຣະຄຣິດ ທີ່ຍັງຂາດຢູ່ນັ້ນ ເຮົາກໍຮັບທົນຈົນສຳເລັດໃນເນື້ອກາຍຂອງເຮົາ ເພາະເຫັນແກ່
ພຣະກາຍຂອງພຣະອົງ ຄື ຄຣິສຕະຈັກ. 25ເຮົາໄດ້ມາເປັນຜູ້ຮັບໃຊ້ຄຣິສຕະຈັກນັ້ນ ຕາມທີ່
ພຣະເຈົ້າ ໄດ້ຊົງໂຜດມອບພາລະໃຫ້ເຮົາເພື່ອເຈົ້າທັງຫລາຍ ເພື່ອຈະໄດ້ກ່າວຂ່າວພຣະທຳຂອງ
ພຣະເຈົ້າ ຢ່າງຄົບຖ້ວນ. 26ຄືຂໍ້ຄວາມອັນລັບເລິກທີ່ໄດ້ຊົງບັງໄວ້ແຕ່ຫລາຍເຊັ່ນແລະຫລາຍຊົ່ວ
ອາຍຸນັ້ນ ມາບັດນີ້ໄດ້ຊົງໂຜດປະກົດແຈ້ງແກ່ໄພ່ພົນຂອງພຣະອົງແລ້ວ. 27ພຣະເຈົ້າ ຊົງມີພຣະ-
ປະສົງທີ່ຈະສະແດງໃຫ້ແກ່ໄພ່ພົນເຫລົ່ານັ້ນຮູ້ວ່າ ໃນຖ້າມກາງຄົນຕ່າງຊາດອັນໃດເປັນຄວາມ

ສົມບູນອັນປະກອບດ້ວຍສະຫງ່າລາສີແຫ່ງຂໍ້ເລິກລັບ ຄືທີ່ພຣະຄຣິດໄດ້ຊົງສະຖິດຢູ່ໃນເຈົ້າທັງ-
ຫລາຍ ຊຶ່ງເປັນເຫດໃຫ້ຫວັງວ່າຈະໄດ້ເຖິງສະຫງ່າລາສີນັ້ນ. 28ພຣະອົງນັ້ນແຫລະ, ທີ່ພວກເຮົາ
ປະກາດຢູ່ ໂດຍເຕືອນສະຕິແລະສັ່ງສອນທຸກຄົນດ້ວຍປັນຍາທຸກຢ່າງ ເພື່ອຈະໄດ້ຖວາຍທຸກຄົນ
ຕໍ່ພຣະພັກພຣະເຈົ້າ ເໝືອນເປັນຄົນໃຫຍ່ຖ້ວນແລ້ວໃນພຣະຄຣິດ. 29ເພື່ອການນີ້ແຫລະ, ເຮົາ
ຈຶ່ງທົນການໜັກໜ່ວງດ້ວຍການອົດສາສູ້ ຕາມພຣະກຳລັງຂອງພຣະອົງຜູ້ຊົງໂຜດກະທຳດ້ວຍ
ລິດອຳນາດໃນຕົວເຮົາຢູ່.

# ບົດທີ 2

1ເພາະເຮົາຢາກໃຫ້ເຈົ້າທັງຫລາຍຮູ້ວ່າ ເຮົາມີການອົດສາສູ້ຫລາຍພຽງໃດເພື່ອເຈົ້າທັງຫລາຍ,
ເພື່ອຊາວເມືອງລາວດີເກອາ, ແລະເພື່ອຄົນທັງປວງທີ່ຍັງບໍ່ໄດ້ເຫັນໃບໜ້າຂອງເຮົາ. 2ເພື່ອເຂົາ
ທັງຫລາຍຈະໄດ້ຮັບຄວາມຊູໃຈ ແລະເຂົ້າຕິດສະໜິດກັນໃນຄວາມຮັກ ຈົນເຖິງຄວາມຮູ້ຄັກແນ່
ອັນອຸດົມສົມບູນຊຶ່ງມາດ້ວຍຄວາມເຂົ້າໃຈຈຶ່ງຈະໄດ້ສັງເກດຮູ້ຂໍ້ລັບເລິກຂອງພຣະເຈົ້າ ຄືພຣະ-
ຄຣິດ. 3ຊຶ່ງຊັບສົມບັດແຫ່ງສະຕິປັນຍາແລະຄວາມຮູ້ທັງໝົດຊົງບັງຊ້ອນໄວ້ໃນພຣະອົງ. 4ເຮົາ
ກ່າວຢ່າງນີ້ກໍເພື່ອບໍ່ໃຫ້ຜູ້ໃດຊັກຊວນແລະລໍ້ລວງເຈົ້າທັງຫລາຍດ້ວຍຄຳລໍ້ລວງອັນໜ້າຟັງ.
5ເພາະເຖິງແມ່ນຕົວຂອງເຮົາບໍ່ຢູ່ນຳເຈົ້າທັງຫລາຍ ແຕ່ຈິດໃຈຂອງເຮົາກໍຢູ່ນຳພວກເຈົ້າ ແລະມີ
ຄວາມຊົມຊື່ນຍິນດີທີ່ໄດ້ເຫັນພວກເຈົ້າພາກັນຢູ່ຢ່າງຮຽບຮ້ອຍ ແລະເຫັນຄວາມເຊື່ອຕັ້ງໝັ້ນຄົງ
ຂອງເຈົ້າທັງຫລາຍໃນພຣະຄຣິດ.

## ຄວາມສົມບູນຂອງຊີວິດໃນພຣະຄຣິດ

6ເຫດສັນນັ້ນ ເມື່ອທ່ານທັງຫລາຍໄດ້ຮັບພຣະເຢຊູຄຣິດເປັນອົງພຣະຜູ້ເປັນເຈົ້າ[ກ] ແລ້ວ
ສັນໃດ ຈົ່ງດຳເນີນຊີວິດຢູ່ໃນພຣະອົງສັນນັ້ນ. 7ຈົ່ງຢັ່ງຮາກແລະກໍ່ສ້າງຂຶ້ນໃນພຣະອົງ ແລະຕັ້ງ
ໝັ້ນຄົງຢູ່ໃນຄວາມເຊື່ອ ຕາມທີ່ເຈົ້າທັງຫລາຍໄດ້ຮັບຄຳສັ່ງສອນມາແລ້ວ ຈົ່ງໃຫ້ຈິດໃຈເຕັມລົ້ນ
ດ້ວຍການຂອບພຣະຄຸນ. 8ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໜຶ່ງຜູ້ໃດນຳເຈົ້າທັງຫລາຍຕົກໄປເປັນເຫຍື່ອ
ສະຕິປັນຍາຂອງໂລກ ຊຶ່ງເປັນຄຳຫລອກລວງແລະໄຮ້ສາລະຕາມຕຳນານຂອງມະນຸດທີ່ສືບຕໍ່
ກັນມາ, ຕາມອຳນາດສິ່ງສັກສິດແຫ່ງສາກົນຈັກກະວານແລະບໍ່ໃຊ້ຕາມອົງພຣະຄຣິດ. 9ເພາະ-
ວ່າໃນພຣະອົງນັ້ນສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະກາຍຢ່າງເຕັມບໍລິບູນ. 10ແລະເຈົ້າ
ທັງຫລາຍໄດ້ມີຊີວິດຄົບບໍລິບູນໃນພຣະອົງ ຜູ້ຊົງເປັນປະມຸກຂອງການປົກຄອງແລະອຳນາດທຸກ
ປະການ. 11ໃນພຣະອົງນັ້ນເຈົ້າທັງຫລາຍໄດ້ຮັບພິທີຕັດທີ່ບໍ່ແມ່ນມືມະນຸດໄດ້ເຮັດ ໂດຍທີ່ເຈົ້າ
ທັງຫລາຍໄດ້ຮັບພິທີຕັດຂອງພຣະຄຣິດ ຊຶ່ງເປັນການຊົງໂຜດໃຫ້ພົ້ນຈາກກິເລດຕັນຫາຂອງ
ເນື້ອກາຍນີ້. 12ແລະໄດ້ຖືກຝັງໄວ້ກັບພຣະອົງໃນພິທີບັບຕິສະມາແລ້ວ ແລະໃນພິທີນັ້ນພວກເຈົ້າ
ໄດ້ຮັບການຊົງບັນດານໃຫ້ຄືນມາດ້ວຍກັນກັບພຣະອົງ ໂດຍຄວາມເຊື່ອໃນການອິດທິລິດຂອງ
ພຣະເຈົ້າຜູ້ໄດ້ຊົງບັນດານໃຫ້ພຣະອົງຄືນພຣະຊົນ. 13ແລະຝ່າຍເຈົ້າທັງຫລາຍທີ່ຕາຍໄປແລ້ວ
ດ້ວຍການຫລົງຜິດຂອງພວກເຈົ້າ, ແລະດ້ວຍເຫດທີ່ເນື້ອກາຍຂອງພວກເຈົ້າບໍ່ໄດ້ຮັບພິທີຕັດ

[ກ]ຫລືວ່າ "ພຣະອົງເຈົ້າເຢຊູເໝືອນເປັນພຣະຄຣິດນັ້ນ."

ພຣະອົງໄດ້ຊົງບັນດານໃຫ້ເຈົ້າມີຊີວິດຮ່ວມກັນກັບພຣະອົງ ແລະຊົງໂຜດຍົກໂທດການຜິດທັງ-
ຫລາຍຂອງພວກເຮົາ. [14]ພຣະອົງຊົງລຶບລ້າງຂໍ້ກົດທີ່ຜູກມັດເຮົາດ້ວຍບັນຍັດຕ່າງໆ ຊຶ່ງຂັດ-
ຂວາງພວກເຮົານັ້ນ ແລະໄດ້ຊົງຍົກເລີກເສຍໂດຍຕອກຕິດໄວ້ທີ່ໄມ້ກາງແຂນ. [15]ໂດຍໄມ້ກາງ
ແຂນນັ້ນ ພຣະອົງໄດ້ຊົງປົດຜູ້ປົກຄອງແລະອຳນາດທັງຫລາຍເສຍ ແລະໄດ້ຊົງປະຈານເຂົາ
ຢ່າງເປີດເຜີຍໂດຍນຳເຂົາເປັນຊະເລີຍໃນຂະບວນການແຫ່ງໄຊຊະນະຂອງພຣະອົງ.
[16]ເຫດສັນນັ້ນຢ່າໃຫ້ຜູ້ໃດກ່າວໂທດເຈົ້າທັງຫລາຍເລື່ອງການກິນການດື່ມ, ໃນເລື່ອງເທດສະ-
ການ, ເລື່ອງວັນຕົ້ນເດືອນ, ຫລືວັນຊະບາໂຕ. [17]ສິ່ງເຫລົ່ານີ້ເປັນພຽງແຕ່ເງົາຂອງເຫດການທີ່
ຈະມາພາຍຫລັງ ແຕ່ຕົວຈິງນັ້ນກໍຄືອົງພຣະຄຣິດ. [18]ຢ່າໃຫ້ຜູ້ໃດສໍ້ໂກງເອົາລາງວັນຂອງເຈົ້າ
ທັງຫລາຍ ດ້ວຍໃຊ້ກິລິຍາທຳທ່າເປັນຜູ້ຖ່ອມຕົວລົງ, ໄຫວ້ເທວະດາແລະໃຝ່ຝັນຢູ່ໃນນິມິດທີ່ເຂົາ
ເຫັນ, ແລະອວດອ້າງຕົວຂຶ້ນເປົ່າໆ ດ້ວຍຄວາມຄິດຢ່າງມະນຸດທຳມະດາ. [19]ແລະບໍ່ໄດ້ຍຶດໝັ້ນ
ໃນພຣະອົງຜູ້ຊົງສີສະ ສີສະນັ້ນເປັນເຫດໃຫ້ກາຍທັງໝົດໄດ້ຮັບການບຳລຸງລ້ຽງ ແລະຕິດຕໍ່ກັນ
ດ້ວຍຂໍ້ແລະເອັນຕ່າງໆ ຈຶ່ງໄດ້ຈະເລີນຂຶ້ນຕາມທີ່ພຣະເຈົ້າໄດ້ຊົງໂຜດໃຫ້ຈະເລີນຂຶ້ນນັ້ນ.

## ການຕາຍແລະການຄືນມາດ້ວຍກັນກັບພຣະຄຣິດ

[20]ຖ້າເຈົ້າທັງຫລາຍໄດ້ຕາຍກັບພຣະຄຣິດ ພົ້ນຈາກອຳນາດສິ່ງສັກສິດແຫ່ງສາກົນຈັກກະ-
ວານແລ້ວ ເຫດສັນໃດພວກເຈົ້າຈຶ່ງມີຊີວິດຢູ່ເໝືອນກັບວ່າພວກເຈົ້າຍັງຢູ່ຝ່າຍໂລກ, ຍອມຢູ່ໃຕ້
ບັນຍັດຕາງໆ. [21]ເປັນຕົ້ນວ່າ, “ຢ່າຈັບ” “ຢ່າຊີມ” “ຢ່າແຕະຕ້ອງ”. [22](ຄືກ່າວເຖິງສິ່ງທີ່ຕ້ອງສູນ
ເສຍໄປເມື່ອໃຊ້ມັນ) ຊຶ່ງເປັນຫລັກທຳແລະຄຳສອນຂອງມະນຸດ. [23]ຈິງຢູ່, ສິ່ງເຫລົ່ານີ້ເບິ່ງທ່າທີ
ເໝືອນມີປັນຍາ ຄືການເຕັມໃຈນະມັດສະການ, ການຖ່ອມຕົວລົງ, ການທໍລະມານກາຍ, ແຕ່ບໍ່
ມີປະໂຫຍດອັນໃດໃນການຕໍ່ສູ້ກັບຄວາມປາດຖະໜາຂອງຝ່າຍເນື້ອກາຍ.

# ບົດທີ 3

[1]ຖ້າເຈົ້າທັງຫລາຍຮັບການຊົງບັນດານໃຫ້ຄືນມາດ້ວຍກັນກັບພຣະຄຣິດແລ້ວ ກໍຈົ່ງສະ-
ແຫວງຫາສິ່ງຊຶ່ງຢູ່ເບື້ອງເທິງ ຄື ບ່ອນທີ່ພຣະຄຣິດຊົງສະຖິດຢູ່ ຊົງປະທັບກ້ຳຂວາຂອງພຣະ-
ເຈົ້າ. [2]ຈົ່ງເອົາໃຈໃສ່ສິ່ງຊຶ່ງຢູ່ເບື້ອງເທິງ ບໍ່ໃຊ່ສິ່ງຊຶ່ງຢູ່ແຜ່ນດິນໂລກ. [3]ເພາະວ່າເຈົ້າທັງຫລາຍ
ໄດ້ຕາຍແລ້ວ ແລະຊີວິດຂອງພວກເຈົ້າກໍຊົງບັງໄວ້ດ້ວຍກັນກັບພຣະຄຣິດໃນພຣະເຈົ້າ. [4]ເມື່ອ
ໃດພຣະຄຣິດ ຜູ້ຊົງເປັນຊີວິດທີ່ແທ້ຈິງຂອງເຮົາທັງຫລາຍຊົງປະກົດ ເມື່ອນັ້ນເຈົ້າທັງຫລາຍກໍ
ຈະປະກົດພ້ອມກັນກັບພຣະອົງໃນສະຫງ່າລາສີເໝືອນກັນ.

## ຊີວິດເກົ່າແລະຊີວິດໃໝ່

[5]ເຫດສັນນັ້ນຈົ່ງປະຫານນິໄສສ່ວນທີ່ອ່ຽງໄປຫາຝ່າຍໂລກຂອງເຈົ້າທັງຫລາຍນັ້ນ ຄື ການ
ຫລິ້ນຊູ້, ການຊົ່ວຮ້າຍ, ລາຄະຕັນຫາ, ຄວາມປາດຖະໜາຊົ່ວ, ແລະຄວາມໂລບຊຶ່ງເປັນການ
ໄຫວ້ພຣະທຽມ. [6]ເພາະສິ່ງເຫລົ່ານີ້ ພຣະພິໂລດຂອງພຣະເຈົ້າຈຶ່ງຈະລົງມາເທິງຄົນທັງປວງທີ່ບໍ່
ຍອມເຊື່ອຟັງ. [7]ແຕ່ກ່ອນ, ເຈົ້າທັງຫລາຍເຄີຍດຳເນີນຊີວິດໃນສິ່ງເຫລົ່ານັ້ນເໝືອນກັນ ຄືເມື່ອຊີ-
ວິດຂອງພວກເຈົ້າຍັງຢູ່ໃນສິ່ງເຫລົ່ານີ້. [8]ແຕ່ບັດນີ້ເຈົ້າທັງຫລາຍຈົ່ງເລີກຖິ້ມສິ່ງສາລະພັດເຫລົ່ານີ້

ເສຍ ຄື ຄວາມຄຽດ, ຄວາມໂມໂຫ, ການຄິດປອງຮ້າຍ, ການກ່າວສຽດສີແລະຄຳໜ້າອາຍ ຢ່າ
ໃຫ້ອອກຈາກປາກຂອງພວກເຈົ້າ. 9ຢ່າກ່າວຄວາມຕົວະຕໍ່ກັນເພາະວ່າເຈົ້າທັງຫລາຍໄດ້ຖອດຖິ້ມ
ສະພາບມະນຸດເກົ່າກັບການຂອງມະນຸດນັ້ນແລ້ວ. 10ແລະໄດ້ສວມສະພາບມະນຸດໃໝ່ທີ່ກຳລັງ
ຊົງສ້າງຂຶ້ນໃໝ່ຢູ່ສະເໝີ ໃຫ້ເຖິງຄວາມຮູ້ຈັກ ພຣະເຈົ້າ ຢ່າງຄົບຖ້ວນຕາມພຣະລັກສະນະຂອງ
ພຣະອົງຜູ້ຊົງສ້າງຂຶ້ນນັ້ນ. 11ໃນການນີ້ຈະວ່າເປັນຄົນຕ່າງຊາດຫລືຄົນຢູດາຍ, ເປັນຄົນຮັບພິທີ
ຕັດຫລືບໍ່ຮັບພິທີຕັດ, ເປັນຄົນຕ່າງປະເທດຫລືຄົນປ່າເຖື່ອນ, ເປັນຂ້ອຍຂ້າຫລືອິດສະຫລະບໍ່ໄດ້
ແຕ່ວ່າ ພຣະຄຣິດ ຊົງເປັນສາລະພັດ ແລະຊົງສະຖິດຢູ່ໃນສາລະພັດ.

12ເຫດສັນນັ້ນໃນຖານະທີ່ເປັນພວກຊຶ່ງ ພຣະເຈົ້າ ໄດ້ຊົງຮັກແລະຊົງເລືອກໄວ້ໃຫ້ເປັນໄພ່ພົນ
ຂອງພຣະອົງ ຈົ່ງສວມໃຈເມດຕາ, ໃຈປານີ, ໃຈຖ່ອມລົງ, ໃຈອ່ອນສຸພາບ, ໃຈອົດທົນດົນ
ນານ. 13ຈົ່ງຜ່ອນໜັກຜ່ອນເບົາເຊິ່ງກັນແລະກັນ ແລະຖ້າແມ່ນຜູ້ໃດມີເລື່ອງຕໍ່ກັນ ກໍຈົ່ງຍົກໂທດ
ໃຫ້ກັນແລະກັນ ອົງ ພຣະຜູ້ເປັນເຈົ້າ ໄດ້ຊົງໂຜດຍົກໂທດໃຫ້ເຈົ້າທັງຫລາຍສັນໃດ ພວກເຈົ້າກໍ
ຈົ່ງຍົກໂທດໃຫ້ກັນແລະກັນສັນນັ້ນ. 14ແລ້ວນອກຈາກສິ່ງທັງປວງນີ້ ຈົ່ງເອົາຄວາມຮັກທີ່ເປັນ
ສາຍຜູກມັດທຸກສິ່ງໄວ້ໃຫ້ເຖິງຄວາມຄົບຖ້ວນ. 15ແລະຈົ່ງໃຫ້ສັນຕິສຸກທີ່ມາຈາກ ພຣະຄຣິດ ຄຸ້ມ
ຄອງຈິດໃຈຂອງເຈົ້າທັງຫລາຍ ພຣະເຈົ້າ ໄດ້ຊົງເອີ້ນເຈົ້າທັງຫລາຍໄວ້ໃຫ້ເປັນກາຍອັນດຽວ ກໍ
ເພື່ອສັນຕິສຸກນັ້ນ ແລະພວກເຈົ້າຈົ່ງມີໃຈກະຕັນຍູ. 16ຈົ່ງໃຫ້ພຣະທຳຂອງ ພຣະຄຣິດ ສະຖິດຢູ່ໃນ
ໃຈຂອງພວກເຈົ້າຢ່າງບໍລິບູນ ຈົ່ງສັ່ງສອນແລະເຕືອນສະຕິກັນແລະກັນດ້ວຍປັນຍາທຸກຢ່າງ ຈົ່ງ
ຮ້ອງເພງດ້ວຍເພງສັນລະເສີນ, ເພງນະມັດສະການ, ແລະເພງຍ້ອງຍໍສໍລະເສີນຝ່າຍ ພຣະວິນ-
ຍານ ຄືຈົ່ງຮ້ອງເພງຖວາຍແດ່ ພຣະເຈົ້າ ດ້ວຍໃຈໂມທະນາພຣະຄຸນ. 17ແລະເມື່ອເຈົ້າທັງຫລາຍ
ຈະເຮັດສິ່ງໃດດ້ວຍວາຈາຫລືດ້ວຍການກະທຳກໍຕາມ ຈົ່ງເຮັດທຸກສິ່ງໃນພຣະນາມຂອງ ພຣະ-
ເຢຊູຄຣິດ ເຈົ້າ ແລະຂອບພຣະຄຸນ ພຣະເຈົ້າ ແລະ ພຣະບິດາ ໂດຍພຣະອົງນັ້ນ.

## ໜ້າທີ່ທາງສັງຄົມແລະຊີວິດໃໝ່

18ຝ່າຍເມຍ, ຈົ່ງຍອມຟັງຜົວຂອງຕົນ ຊຶ່ງເປັນການສົມຄວນໃນອົງ ພຣະຜູ້ເປັນເຈົ້າ. 19ຝ່າຍ
ຜົວກໍຈົ່ງຮັກແພງເມຍຂອງຕົນ ແລະຢ່າມີໃຈເຜັດຮ້ອນຕໍ່ນາງ. 20ຝ່າຍລູກທັງຫລາຍ, ຈົ່ງຟັງ
ຄວາມພໍ່ແມ່ຂອງຕົນໃນທຸກສິ່ງ ເພາະເຮັດຢ່າງນັ້ນເປັນທີ່ຊອບພຣະໄທຂອງອົງ ພຣະຜູ້ເປັນເຈົ້າ.
21ຝ່າຍພໍ່, ຢ່າຍົວະລູກຂອງຕົນໃຫ້ຂັດເຄືອງໃຈ ຢ້ານວ່າເຂົາຈະທໍ້ຖອຍໃຈ. 22ຝ່າຍພວກຂ້ອຍ
ຂ້າ, ຈົ່ງຟັງຄວາມຜູ້ທີ່ເປັນນາຍຝ່າຍມະນຸດໃນທຸກສິ່ງ ບໍ່ໃຊ້ເຮັດຖະແຫລງໜ້າເໝືອນຢ່າງຄົນຜູ້
ທີ່ມັກເຮັດແຕ່ໃຫ້ຊອບໃຈມະນຸດເທົ່ານັ້ນ. 23ແຕ່ຈົ່ງເຮັດດ້ວຍນໍ້າໃສໃຈຈິງ ດ້ວຍຄວາມຢຳເກງ
ອົງ ພຣະຜູ້ເປັນເຈົ້າ ສິ່ງໜຶ່ງສິ່ງໃດທີ່ພວກເຈົ້າເຮັດນັ້ນ ຈົ່ງເຮັດດ້ວຍເຕັມໃຈ ເໝືອນເຮັດຖວາຍ
ກຽດແກ່ອົງ ພຣະຜູ້ເປັນເຈົ້າ ບໍ່ໃຊ່ເຮັດເພື່ອເຫັນແກ່ມະນຸດ. 24ດ້ວຍຮູ້ແລ້ວວ່າ ອົງ ພຣະຜູ້ເປັນ-
ເຈົ້າ ຈະຊົງໃຫ້ເຈົ້າທັງຫລາຍໄດ້ຮັບມໍລະດົກເປັນຄ່າບຳເໜັດ ເພາະວ່າຜູ້ທີ່ເຈົ້າທັງຫລາຍຮັບ
ໃຊ້[ກ] ນັ້ນ ກໍແມ່ນ ພຣະຄຣິດ ເຈົ້າ. 25ສ່ວນຜູ້ທີ່ເຮັດການຊົ່ວກໍຈະໄດ້ຮັບຜົນຕາມຄວາມຊົ່ວທີ່ຕົນ
ໄດ້ເຮັດນັ້ນ ແລະບໍ່ມີການຊົງເຫັນແກ່ໜ້າຜູ້ໃດເລີຍ.

---

[ກ]ພາສາເດີມວ່າ “ເປັນຂ້ອຍຂ້າຮັບໃຊ້.”

# ບົດທີ 4

1ຝ່າຍນາຍກໍຈົ່ງເຮັດແກ່ພວກຂ້ອຍຂ້າຂອງຕົນຕາມຄວາມຍຸດຕິທຳ ແລະສະໝ່ຳສະເໝີກັນ
ດ້ວຍຮູ້ແລ້ວວ່າ ເຈົ້າທັງຫລາຍກໍມີນາຍອົງໜຶ່ງໃນສະຫວັນເໝືອນກັນ.

## ຄຳເຕືອນສະຕິ

2ຈົ່ງໝັ້ນພຽນໃສ່ໃຈໃນການອ້ອນວອນ ຈົ່ງເຝົ້າລະວັງຢູ່ໃນການນັ້ນດ້ວຍຂອບພຣະຄຸນ.
3ແລະອ້ອນວອນເພື່ອພວກເຮົາດ້ວຍ ເພື່ອພຣະເຈົ້າຈະໄດ້ຊົງໂຜດໄຂປະຕູໄວ້ສຳລັບພຣະທຳ
ນັ້ນ ໃຫ້ພວກເຮົາກ່າວຂໍ້ລັບເລິກເລື່ອງພຣະຄຣິດ (ທີ່ເຮົາຖືກຈຳຈອງຢູ່ກໍເພາະເຫດນີ້). 4ເພື່ອ
ເຮົາຈະໄດ້ກ່າວຊີ້ແຈງຂໍ້ເລິກນັ້ນຕາມທີ່ເຮົາຄວນຈະກ່າວ. 5ຈົ່ງປະຕິບັດຕໍ່ຄົນພາຍນອກດ້ວຍໃຊ້
ສະຕິປັນຍາ, ໂດຍສວຍໂອກາດ. 6ຈົ່ງໃຫ້ວາຈາຂອງເຈົ້າທັງຫລາຍປະກອບດ້ວຍເມດຕາຄຸນຢູ່
ສະເໝີ ປະສົມດ້ວຍເກືອ[ກ] ເພື່ອເຈົ້າທັງຫລາຍຈະໄດ້ຮູ້ວິທີຕອບທີ່ຖືກໃຈແກ່ທຸກຄົນ.

## ຄຳສະແດງຄວາມຄຶດເຖິງໃນຕອນທ້າຍ

7ຕີຂີໂກ, ຜູ້ເປັນນ້ອງທີ່ຮັກແລະເປັນຜູ້ຮັບໃຊ້ທີ່ສັດຊື່ ແລະເປັນເພື່ອນຮັບໃຊ້[ຂ] ຮ່ວມກັບພວກ
ເຮົາໃນອົງພຣະຜູ້ເປັນເຈົ້າ ຈະບອກໃຫ້ເຈົ້າທັງຫລາຍຮູ້ເຖິງເຫດການທັງປວງຂອງພວກເຮົາ.
8ເຮົາໄດ້ໃຊ້ຜູ້ນີ້ໄປຫາພວກເຈົ້າກໍເພາະເຫດນີ້ ຄື ເພື່ອເຈົ້າທັງຫລາຍຈະໄດ້ຮູ້ເຖິງການເປັນຢູ່
ຂອງພວກເຮົາແລະເພື່ອເພິ່ນຈະໄດ້ໜູນນ້ຳໃຈພວກເຈົ້າ. 9ໃຫ້ໂອເນຊີໂມ ຜູ້ເປັນນ້ອງທີ່ຮັກແລະ
ສັດຊື່ ຊຶ່ງເປັນຄົນໜຶ່ງໃນພວກເຈົ້າໄປດ້ວຍ ເຂົາທັງສອງນັ້ນຈະເລົ່າໃຫ້ເຈົ້າທັງຫລາຍຮູ້ເຖິງ
ເຫດການທັງປວງທີ່ຢູ່ທີ່ນີ້.

10ອາຣິດຕາໂຂ, ຜູ້ຖືກຄຸມຂັງຮ່ວມກັບເຮົາ ກໍຝາກຄວາມຄຶດເຖິງມາຍັງເຈົ້າທັງຫລາຍ ແລະ
ມາຣະໂກນ້ອງຂອງບາຣະນາບາກໍຝາກຄວາມຄຶດເຖິງມາຍັງເຈົ້າທັງຫລາຍເໝືອນກັນ (ເລື່ອງ
ມາຣະໂກນັ້ນເຈົ້າທັງຫລາຍໄດ້ຮັບຄຳສັ່ງແລ້ວວ່າ ຖ້າເພິ່ນໄປຫາພວກເຈົ້າຈົ່ງຕ້ອນຮັບເພິ່ນ).
11ແລະເຢຊູ, ຜູ້ທີ່ເຂົາເອີ້ນກັນວ່າຢູສະໂຕ ກໍຝາກຄວາມຄຶດເຖິງມາຍັງເຈົ້າທັງຫລາຍເໝືອນກັນ
ໃນບັນດາເພື່ອນຮ່ວມງານຂອງເຮົາເພື່ອລາຊະອານາຈັກຂອງພຣະເຈົ້າ ມີແຕ່ຄົນນີ້ເທົ່ານັ້ນທີ່ມາ
ຈາກຝ່າຍພິທີຕັດ ແລະເຂົາເປັນຜູ້ໜູນນ້ຳໃຈຂອງເຮົາ. 12ເອປາຟາ, ຊຶ່ງເປັນຄົນໜຶ່ງໃນພວກ
ເຈົ້າແລະເປັນຜູ້ຮັບໃຊ້ຂອງພຣະເຢຊູຄຣິດ ກໍຝາກຄວາມຄຶດເຖິງມາຍັງເຈົ້າທັງຫລາຍເໝືອນກັນ
ເພິ່ນໄດ້ອົດສາສູ້ໃນການອ້ອນວອນສຳລັບເຈົ້າທັງຫລາຍຢູ່ສະເໝີ ຫວັງຈະໃຫ້ພວກເຈົ້າຕັ້ງໝັ້ນຢູ່
ເປັນຜູ້ໃຫຍ່ຖ້ວນ ແລະຮັບຄວາມແນ່ໃຈອັນແໜ້ນໜາໃນທຸກສິ່ງຕາມນ້ຳພຣະໄທຂອງພຣະເຈົ້າ.
13ເຮົາເປັນພະຍານຝ່າຍເພິ່ນວ່າ ເພິ່ນໄດ້ເຮັດການໜັກໜ່ວງເພື່ອພວກເຈົ້າ, ແລະເພື່ອຄົນທີ່ຢູ່ໃນ
ເມືອງລາວດີເກອາ, ທັງເພື່ອຄົນທີ່ຢູ່ເມືອງເຮຍຣາໂປລີ. 14ລູກາ, ໝໍຢາທີ່ຮັກ ກັບ ເດມານັ້ນກໍ
ຝາກຄວາມຄຶດເຖິງມາຍັງເຈົ້າທັງຫລາຍ. 15ເຮົາຝາກຄວາມຄຶດເຖິງມາຍັງພວກພີ່ນ້ອງທີ່ຢູ່ເມືອງ
ລາວດີເກອາ ກັບນາງນິມຟາ ທັງຄຣິສຕະຈັກທີ່ຢູ່ໃນເຮືອນຂອງນາງເໝືອນກັນ. 16ແລະເມື່ອ
ເຈົ້າທັງຫລາຍໄດ້ອ່ານຈົດໝາຍສະບັບນີ້ແລ້ວ ຈົ່ງສົ່ງໄປໃຫ້ອ່ານໃນຄຣິສຕະຈັກທີ່ຢູ່ເມືອງລາວ-
ດີເກອາດ້ວຍ ແລ້ວຈົດໝາຍທີ່ມາຈາກເມືອງລາວດີເກອານັ້ນ ພວກເຈົ້າຈົ່ງອ່ານເໝືອນກັນ.

[ກ]ຄືວ່າ ຢ່າໃຫ້ວາຈາເປັນຈືດຈາງ. [ຂ]ພາສາເດີມວ່າ "ຂ້ອຍຂ້າ."

[17]ແລະຈົ່ງບອກອາຂີໂປວ່າ, "ສ່ວນການບົວລະບັດທີ່ເຈົ້າໄດ້ຮັບໃນອົງພຣະຜູ້ເປັນເຈົ້ານັ້ນ ຈົ່ງ
ລະວັງເຮັດໃຫ້ສຳເລັດ."

[18]ຄຳສະແດງຄວາມຄຶດເຖິງນີ້ເປັນລາຍມືຂອງເຮົາ, ໂປໂລ ຂໍພວກເຈົ້າຈົ່ງລະນຶກເຖິງໂສ້
ຂອງເຮົາທ້ອນ ຂໍໃຫ້ພຣະຄຸນຈົ່ງສະຖິດຢູ່ນຳເຈົ້າທັງຫລາຍເທີນ.

* * *

# ຈົດໝາຍຂອງໂປໂລທີ່ມີໄປເຖິງຄຣິສຕະຈັກໃນເມືອງ ເທຊະໂລນິກ ສະບັບຕົ້ນ

## ບົດທີ 1

1ໂປໂລ ກັບຊີລາວານ ແລະ ຕີໂມທຽວ ເຖິງ ຄຣິສຕະຈັກຂອງຊາວ ເທຊະໂລນິກ ໃນ ພຣະບິດາ
ເຈົ້າ ແລະ ໃນພຣະອົງ ເຈົ້າ ພຣະເຢຊູຄຣິດ: ຂໍໃຫ້ພຣະຄຸນ ແລະ ສັນຕິສຸກ ຈົ່ງ ມີຢູ່ກັບພີ່ນ້ອງທັງ-
ຫລາຍເທີນ.

### ຄວາມເຊື່ອແລະແບບຢ່າງຂອງຊາວເທຊະໂລນິກ

2ພວກເຮົາຂອບພຣະຄຸນ ພຣະເຈົ້າ ເພາະເຈົ້າທັງປວງຢູ່ສະເໝີ ແລະໃນຄວາມອ້ອນວອນຂອງ
ພວກເຮົາກໍເອີ່ຍເຖິງພວກເຈົ້າຢູ່. 3ໂດຍບໍ່ໄດ້ຢຸດຢັ້ງໃນການລະນຶກເຖິງກິດຈະການຂອງເຈົ້າທັງ-
ຫລາຍ ອັນເກີດມາຈາກຄວາມເຊື່ອ ກັບທັງການງານອັນໜັກໜ່ວງທີ່ພວກເຈົ້າຍອມເຮັດຍ້ອນ
ຄວາມຮັກ ແລະຄວາມໝັ້ນພຽນອັນມີມາຈາກຄວາມໄວ້ວາງໃຈໃນ ພຣະເຢຊູຄຣິດ ເຈົ້າຂອງພວກ
ເຮົາ. 4ພີ່ນ້ອງທັງຫລາຍຜູ້ເປັນທີ່ຮັກຂອງ ພຣະເຈົ້າ ເອີຍ, ພວກເຮົາຮູ້ເຖິງການຊົງເລືອກເຈົ້າທັງ-
ຫລາຍໄວ້ແລ້ວນັ້ນ. 5ເພາະວ່າຂ່າວປະເສີດຂອງເຮົາບໍ່ໄດ້ມາເຖິງພວກເຈົ້າພໍເປັນ ແຕ່ຖ້ອຍຄຳ
ເທົ່ານັ້ນ ແຕ່ວ່າໄດ້ມາດ້ວຍລິດອຳນາດກັບທັງ ພຣະວິນຍານບໍລິສຸດ ແລະຄວາມໄວ້ໃຈອັນຄົບ
ຖ້ວນຕາມດັ່ງ ເຈົ້າທັງຫລາຍຮູ້ວ່າ ພວກ ເຮົາກາຍເປັນຄົນຢ່າງໃດ ໃນ ຖ້າມກາງ ພວກ ເຈົ້າ ເພາະ
ເຫັນແກ່ເຈົ້າທັງຫລາຍ.

6ແລະຝ່າຍພວກເຈົ້າ, ກໍໄດ້ກາຍເປັນຜູ້ຊອບ ເອົາຕາມ ແບບຢ່າງຂອງ ເຮົາ ພ້ອມທັງຂອງ
ພຣະຜູ້ເປັນເຈົ້າ ດ້ວຍ ເຖິງ ແມ່ນວ່າເຈົ້າທັງຫລາຍໄດ້ຖືກຄວາມຍາກລຳບາກອັນຫລວງຫລາຍກໍ
ຕາມ ພວກ ເຈົ້າກໍໄດ້ຮັບພຣະທຳນັ້ນດ້ວຍຄວາມຊົມຊື່ນຍິນດີທີ່ມາຈາກ ພຣະວິນຍານບໍລິສຸດ.
7ຈົນ ເຈົ້າທັງຫລາຍໄດ້ກາຍເປັນ ແບບຢ່າງ ແກ່ຄົນທັງປວງທີ່ ເຊື່ອແລ້ວ ໃນ ແຂວງ ມາເກໂດເນຍ
ແລະ ແຂວງ ອະຂາຢາ. 8ເພາະວ່າພຣະທຳຂອງພຣະອົງ ເຈົ້າໄດ້ອອກຈາກພວກເຈົ້າຊ່າລືກ້ອງໄປ
ບໍ່ໃຊ້ແຕ່ໃນແຂວງ ມາເກໂດເນຍ ແລະ ແຂວງ ອະຂາຢາ ເທົ່ານັ້ນ ແຕ່ຂ່າວແຫ່ງຄວາມເຊື່ອ ພຣະ-
ເຈົ້າ ຂອງພວກເຈົ້ານັ້ນໄດ້ຊ່າລືອອກໄປທົ່ວທຸກແຫ່ງຫົນ ຈົນພວກເຮົາບໍ່ຈຳເປັນຈະຕ້ອງ ເວົ້າອັນ
ໃດອີກ. 9ດ້ວຍວ່າຄົນເຫລົ່ານັ້ນເອງກໍໄດ້ລາຍງານເຖິງເລື່ອງພວກເຮົາວ່າ ເຮົາໄດ້ເຂົ້າມາຫາເຈົ້າ
ທັງຫລາຍ ເປັນຢ່າງໃດ ແລະພວກ ເຈົ້າໄດ້ອ່ວາຍໜີຈາກພຣະທຽມມາຫາ ພຣະເຈົ້າ ດ້ວຍຢ່າງໃດ
ເພື່ອຮັບໃຊ້ ພຣະເຈົ້າ ຜູ້ຊົງ ພຣະຊົນຢູ່ ແລະຜູ້ທ່ຽງ ແທ້. 10ແລະຄອຍຖ້າ ພຣະບຸດ ຂອງພຣະອົງ
ຈາກສະຫວັນ ຊຶ່ງພຣະອົງໄດ້ຊົງບັນດານໃຫ້ພຣະບຸດນັ້ນຄືນຂຶ້ນມາຈາກຕາຍ ຄື ພຣະເຢຊູ ຜູ້ໄດ້
ຊົງ ໂຜດເຮົາທັງຫລາຍ ໃຫ້ພົ້ນຈາກພຣະພິໂລດທີ່ຈະມີມານັ້ນ.

# ບົດທີ 2

## ກິດຈະການງານຂອງໂປໂລໃນເມືອງເທຊະໂລນິກ

1ພີ່ນ້ອງທັງຫລາຍເອີຍ, ພວກເຈົ້າເອງກໍຮູ້ວ່າ ການທີ່ພວກເຮົາໄດ້ມາຫາພວກເຈົ້ານັ້ນບໍ່ເປັນ
ການເສຍປະໂຫຍດ. 2ແຕ່ເຖິງແມ່ນວ່າເຮົາໄດ້ທົນການຍາກລຳບາກມາກ່ອນ ແລະໄດ້ຮັບການ
ປະຈານຂາຍໜ້າທີ່ເມືອງຟີລິບປອຍ ຕາມດັ່ງເຈົ້າທັງຫລາຍຮູ້ຢູ່ແລ້ວນັ້ນ ພວກເຮົາກໍຍັງມີໃຈກ້າ
ໃນ ພຣະເຈົ້າ ຂອງເຮົາທັງຫລາຍ ເພື່ອປະກາດຂ່າວປະເສີດເລື່ອງ ພຣະເຈົ້າ ແກ່ພວກເຈົ້າ ດ້ວຍ
ມີການຕໍ່ສູ້ຢ່າງຫລວງຫລາຍ. 3ເພາະວ່າຄຳເຕືອນສະຕິຂອງພວກເຮົາບໍ່ໃຊ້ເນື່ອງມາຈາກຄວາມ
ຫລົງຜິດ, ຫລືການຊົ່ວຮ້າຍ, ຫລືກົນອຸບາຍ. 4ແຕ່ຕາມດັ່ງ ພຣະເຈົ້າ ໄດ້ຊົງລອງເບິ່ງໃຈຂອງເຮົາ
ຈຶ່ງຊົງເຫັນຊອບທີ່ຈະມອບຂ່າວປະເສີດໄວ້ກັບເຮົາ ດັ່ງນີ້ພວກເຮົາຈຶ່ງກ່າວຢູ່ ບໍ່ໃຊ້ເພື່ອໃຫ້ຊອບ
ໃຈມະນຸດ ແຕ່ເພື່ອໃຫ້ຊອບໃຈພຣະໄທ ພຣະເຈົ້າ ຜູ້ຊົງຊັນນະສູດເບິ່ງໃຈຂອງເຮົາທັງຫລາຍ.
5ເພາະວ່າພວກເຮົາບໍ່ໄດ້ໃຊ້ຖ້ອຍຄຳຖະແຫລງຍ້ອງຍໍຈັກເທື່ອຕາມດັ່ງເຈົ້າທັງຫລາຍຮູ້ແລ້ວ ຫລື
ບໍ່ໄດ້ໃຊ້ອຸບາຍປົກບັງໂລພະຕັນຫາໄວ້ ພຣະເຈົ້າຊົງເປັນພະຍານຝ່າຍພວກເຮົາ. 6ເຖິງແມ່ນວ່າ
ເຮົາເປັນອັກຄະສາວົກຂອງ ພຣະຄຣິດ ແລະມີສິດຮຽກຮ້ອງໄດ້ ເຮົາກໍບໍ່ໄດ້ສະແຫວງຫາກຽດຕິ-
ຍົດຈາກມະນຸດ ບໍ່ວ່າຈະມາຈາກພວກເຈົ້າຫລືຄົນອື່ນ. 7ແຕ່ວ່າພວກເຮົາໄດ້ຢູ່ຖາມກາງພວກເຈົ້າ
ດ້ວຍໃຈສຸພາບອ່ອນໂຍນ ເໝືອນດັ່ງແມ່ທີ່ລ້ຽງລູກອ່ອນນ້ອຍຂອງຕົນ. 8ເມື່ອພວກເຮົາມີໃຈຮັກ-
ແພງເຈົ້າທັງຫລາຍດັ່ງນີ້ແລ້ວ ເຮົາກໍມີໃຈພ້ອມທີ່ຈະເຜື່ອແຜ່ ບໍ່ໃຊ້ແຕ່ພຽງຂ່າວປະເສີດ ພຣະເຈົ້າ
ເທົ່ານັ້ນ ແຕ່ມີໃຈພ້ອມທີ່ຈະສະຫລະຊີວິດຈິດໃຈຂອງເຮົາໃຫ້ແກ່ເຈົ້າດ້ວຍ ເພາະວ່າພວກເຈົ້າ
ເກີດເປັນທີ່ຮັກແພງແກ່ພວກເຮົາ. 9ພີ່ນ້ອງເອີຍ, ເຈົ້າທັງຫລາຍຄົງຈຳໄດ້ເຖິງການອັນໜັກໜ່ວງ
ແລະຄວາມລຳບາກຂອງພວກເຮົາ ເມື່ອເວລາພວກເຮົາໄດ້ປະກາດຂ່າວປະເສີດຂອງ ພຣະເຈົ້າ
ແກ່ເຈົ້າທັງຫລາຍ ເຮົາໄດ້ເຮັດການທັງກາງເວັນແລະກາງຄືນ ເພື່ອຈະບໍ່ໃຫ້ຜູ້ໃດໃນພວກເຈົ້າ
ໄດ້ຮັບພາລະອັນໜັກຍ້ອນພວກເຮົາ. 10ຝ່າຍເຈົ້າທັງຫລາຍກໍເປັນພະຍານແລະ ພຣະເຈົ້າ ຊົງເປັນ
ພະຍານເໝືອນກັນວ່າ ເຮົາໄດ້ປະຕິບັດຕົນຢ່າງບໍລິສຸດ, ທ່ຽງທຳ, ແລະບໍ່ມີຂໍ້ຕິຕຽນໄດ້ຢ່າງໃດ
ໃນຖ້າມກາງພວກເຈົ້າທັງຫລາຍທີ່ເຊື່ອແລ້ວ. 11ຕາມດັ່ງເຈົ້າທັງຫລາຍຊາບແລ້ວວ່າ ເຮົາໄດ້
ເຮັດນຳພວກເຈົ້າທຸກຄົນເໝືອນພໍ່ກັບລູກຂອງຕົນ. 12ຄືໄດ້ເຕືອນສະຕິໜູນໃຈພວກເຈົ້າ ແລະສັ່ງ
ເນັ້ນພວກເຈົ້າເພື່ອໃຫ້ດຳເນີນຊີວິດຕາມຢ່າງສົມຄວນຕໍ່ ພຣະເຈົ້າ ຜູ້ຊົງເອີ້ນເອົາເຈົ້າທັງຫລາຍ
ໃຫ້ເຂົ້າມາໃນລາຊະອານາຈັກ ແລະໃນສະຫງ່າລາສີຂອງພຣະອົງເອງ. 13ເພາະເຫດນີ້ແຫລະ,
ພວກເຮົາຈຶ່ງຂອບພຣະຄຸນ ພຣະເຈົ້າ ໂດຍບໍ່ຢຸດບໍ່ຢັ້ງ ເພາະເມື່ອພວກເຈົ້າໄດ້ຮັບເອົາພຣະທຳ
ຂອງ ພຣະເຈົ້າ ທີ່ໄດ້ຍິນຈາກພວກເຮົານັ້ນ ພວກເຈົ້າບໍ່ໄດ້ຕ້ອນຮັບເອົາເໝືອນເປັນຂໍ້ຄວາມຂອງ
ມະນຸດ ແຕ່ໄດ້ຮັບເອົາຕາມຄວາມເປັນຈິງເໝືອນເປັນພຣະທຳຂອງ ພຣະເຈົ້າ ທີ່ດຳເນີນງານຢູ່
ພາຍໃນເຈົ້າທັງຫລາຍທີ່ເຊື່ອ. 14ພີ່ນ້ອງເອີຍ, ເຈົ້າທັງຫລາຍໄດ້ກາຍເປັນຜູ້ປະຕິບັດຕາມແບບ-
ຢ່າງຄຣິສຕະຈັກທັງຫລາຍໃນແຂວງຢູດາຍ ຊຶ່ງເປັນຂອງ ພຣະເຈົ້າ ໃນ ພຣະເຢຊູຄຣິດ ເພາະ-
ວ່າເຈົ້າທັງຫລາຍໄດ້ທົນຮັບເອົາຄວາມລຳບາກຈາກເພື່ອນຮ່ວມຊາດຂອງຕົນ ເໝືອນຄຣິສຕະ-
ຈັກນັ້ນໄດ້ທົນຮັບເອົາຄວາມລຳບາກຈາກພວກຢູດາຍດ້ວຍ. 15ແມ່ນພວກຢູດາຍນັ້ນແຫລະ, ທີ່

ໄດ້ປະຫານຊີວິດ ພຣະເຢຊູເຈົ້າ ກັບທັງພວກຜູ້ປະກາດພຣະທຳ ແລະໄດ້ຂັບໄລ່ພວກເຮົາໃຫ້ໜີ
ໄປ ເຂົາຂັດພຣະໄທ ພຣະເຈົ້າ ທັງຕໍ່ສູ້ຄົນທັງປວງ. 16ໂດຍທີ່ເຂົາໄດ້ຫ້າມປາມພວກເຮົາບໍ່ໃຫ້
ກ່າວແກ່ຄົນຕ່າງຊາດ ເພື່ອຄົນເຫລົ່ານັ້ນຈະພົ້ນໄດ້ ເພື່ອຄວາມຜິດບາບທີ່ເຂົາເຮັດມານັ້ນຈະຄົບ
ຖ້ວນ ແຕ່ໃນທ້າຍສຸດພຣະພິໂລດໄດ້ຕົກໃສ່ເຂົາແລ້ວ.[ກ]

## ຈຸດປະສົງຂອງໂປໂລຢາກໄປຢາມຄຣິສຕະຈັກອີກ

17ພີ່ນ້ອງທັງຫລາຍເອີຍ, ແຕ່ເມື່ອພວກເຮົາໄດ້ຖືກພັດພາກຈາກພວກເຈົ້າໄປຈັກຫວ່າງໜຶ່ງ ກໍ
ພາກໄປແຕ່ຮ່າງກາຍເທົ່ານັ້ນ ບໍ່ແມ່ນຈິດໃຈ ເຮົາຈຶ່ງພະຍາຍາມດ້ວຍຄວາມປາດຖະໜາຢ່າງ
ຮ້ອນຮົນ ຊອກຫາໂອກາດເພື່ອເຫັນໜ້າພວກເຈົ້າ. 18ດ້ວຍເຫດນັ້ນພວກເຮົາມີໃຈປະສົງຢາກມາ
ຫາພວກເຈົ້າ (ເຮົາ, ໂປໂລ ໝາຍໃຈຈະມາເທື່ອໜຶ່ງສອງເທື່ອແລ້ວ) ແຕ່ວ່າຊາຕານໄດ້ມາຂັດ-
ຂວາງພວກເຮົາໄວ້. 19ດ້ວຍວ່າແມ່ນສິ່ງໃດຈະເປັນທີ່ຫວັງໃຈຂອງເຮົາ, ຫລືທີ່ຊົມຊື່ນຍິນດີ, ຫລື
ພວງມາໄລອັນໃຫ້ມີຄວາມອວດອ້າງຊ້ອງພຣະພັກ ພຣະເຢຊູເຈົ້າ ຂອງເຮົາທັງຫລາຍ ເມື່ອພຣະ-
ອົງຈະສະເດັດມາປະກົດ ບໍ່ແມ່ນພວກເຈົ້າດອກຫລື. 20ເຫດວ່າເຈົ້າທັງຫລາຍນັ້ນແຫລະ, ເປັນ
ກຽດຕິຍົດແລະຄວາມຊື່ນຊົມຍິນດີຂອງເຮົາທັງຫລາຍ.

# ບົດທີ 3

1ເຫດສັນນັ້ນ, ຄັນເຮົາອົດຢູ່ຕໍ່ໄປອີກບໍ່ໄດ້ ຈຶ່ງເຫັນດີໃຫ້ເຂົາປະເຮົາຜູ້ດຽວຢູ່ກຸງອາແຖນ.
2ແລະໄດ້ໃຊ້ຕີໂມທຽວພີ່ນ້ອງຂອງເຮົາ ທີ່ເປັນຜູ້ຮັບໃຊ້ຂອງ ພຣະເຈົ້າ ຝ່າຍຂ່າວປະເສີດເລື່ອງ
ພຣະຄຣິດ ໃຫ້ໄປຫາເຈົ້າທັງຫລາຍ ເພື່ອຈະຕັ້ງພວກເຈົ້າໄວ້ໃຫ້ໝັ້ນຄົງ ທັງຈະຊູໃຈໃນເລື່ອງ
ຄວາມເຊື່ອຂອງເຈົ້າ. 3ເພື່ອບໍ່ໃຫ້ມີໃຜຈັກຄົນວຸ້ນວາຍໄປດ້ວຍເຫດການລຳບາກທັງຫລາຍນີ້
ເຈົ້າທັງຫລາຍກໍຊາບແລ້ວວ່າ ເຮົາທັງຫລາຍຖືກຊົງກຳນົດໄວ້ແລ້ວສຳລັບການນັ້ນ. 4ດ້ວຍວ່າ,
ເມື່ອໄດ້ຢູ່ນຳເຈົ້າທັງຫລາຍ ພວກເຮົາໄດ້ບອກເຈົ້າລ່ວງໜ້າໄວ້ແລ້ວວ່າ ເຮົາຄົງຈະຖືກການລຳ-
ບາກຕາມດັ່ງໄດ້ເກີດມີມາແລ້ວ ຕາມທີ່ເຈົ້າທັງຫລາຍຮູ້ແລ້ວນັ້ນ. 5ດ້ວຍເຫດນັ້ນ, ຄັນເຮົາອົດຢູ່
ຕໍ່ໄປອີກບໍ່ໄດ້ ຈຶ່ງໄດ້ໃຊ້ຄົນໄປເພື່ອຈະໄດ້ຮູ້ເຖິງຄວາມເຊື່ອຂອງພວກເຈົ້າຢ້ານວ່າຜູ້ທົດລອງນັ້ນ
ຈະໄດ້ທົດລອງເຈົ້າທັງຫລາຍດ້ວຍຢ່າງໜຶ່ງຢ່າງໃດ ແລ້ວການໜັກໜ່ວງຂອງເຮົາກໍຈະກາຍເປັນ
ການເສຍປະໂຫຍດ.

6ແຕ່ບັດນີ້ຕີໂມທຽວໄດ້ກັບມາຈາກເຈົ້າທັງຫລາຍ ຫາກໍມາຮອດພວກເຮົາ ແລະໄດ້ນຳຂ່າວດີ
ມາບອກພວກເຮົາດ້ວຍເລື່ອງຄວາມເຊື່ອແລະຄວາມຮັກຂອງພວກເຈົ້າ ກັບທັງບອກວ່າເຈົ້າທັງ-
ຫລາຍມີຄວາມຄຶດເຖິງພວກເຮົາຢ່າງດີຢູ່ສະເໝີແລະປາດຖະໜາຢ່າງຫລວງຫລາຍຢາກເຫັນ
ພວກເຮົາ ເໝືອນດັ່ງພວກເຮົາປາດຖະໜາຢາກເຫັນພວກເຈົ້ານັ້ນ. 7ດ້ວຍເຫດນີ້ແຫລະ ພີ່ນ້ອງ
ທັງຫລາຍເອີຍ, ຄວາມເຊື່ອຂອງພວກເຈົ້ານັ້ນໄດ້ເຮັດໃຫ້ເຮົາບັນເທົາຈາກຄວາມທຸກຍາກ ແລະ
ຄວາມລຳບາກຂອງພວກເຮົາທຸກປະການ. 8ເພາະວ່າເມື່ອເຈົ້າທັງຫລາຍຕັ້ງໝັ້ນຄົງຢູ່ໃນອົງ
ພຣະຜູ້ເປັນເຈົ້າ ຊີວິດຂອງເຮົາກໍສົດຊື່ນ. 9ເຮົາຈະຂອບພຣະຄຸນ ພຣະເຈົ້າ ເພາະເຈົ້າທັງຫລາຍ

[ກ]ຫລືວ່າ “ແຕ່ວ່າພຣະພິໂລດໄດ້ຄອບງຳເຂົາຢ່າງໜັກແໜ້ນ.”

ຢ່າງໃດອີກ ຈຶ່ງຈະເໝາະສົມສຳລັບຄວາມຊົມຊື່ນຍິນດີທັງໝົດທີ່ເຮົາມີຢູ່ຍ້ອນພວກເຈົ້າຊ້ອງ
ພຣະພັກພຣະເຈົ້າຂອງເຮົາທັງຫລາຍ. [10]ຍາມເມື່ອພວກເຮົາໄດ້ອ້ອນວອນທັງກາງເວັນ ແລະ
ກາງຄືນຢ່າງຫລວງຫລາຍ ເພື່ອຈະໄດ້ເຫັນໜ້າເຈົ້າທັງຫລາຍອີກ ທັງຈະໄດ້ເພີ່ມເຕີມຄວາມເຊື່ອ
ຂອງພວກເຈົ້າ ສ່ວນທີ່ຍັງບົກພ່ອງຢູ່ນັ້ນໃຫ້ຄົບບໍລິບູນ.
[11]ອັນໜຶ່ງ, ຂໍພຣະເຈົ້າຄືພຣະບິດາ ແລະ ພຣະເຢຊູເຈົ້າຂອງເຮົາທັງຫລາຍ ຈົ່ງຊົງນຳທາງ
ເຮົາໄປຫາພວກເຈົ້າ. [12]ແລະເຮົາກໍທູນຂໍພຣະເຈົ້າຊົງໂຜດໃຫ້ພວກເຈົ້າຈະເລີນຂຶ້ນ ແລະລົ້ນ
ເຫລືອໄປດ້ວຍຄວາມຮັກກັນແລະກັນ ທັງຮັກຄົນທັງປວງເໝືອນດັ່ງພວກເຮົາໄດ້ຮັກເຈົ້າທັງ-
ຫລາຍນັ້ນແຫລະ. [13]ເພື່ອພຣະອົງຈະໄດ້ຊົງຊູໃຈຂອງເຈົ້າທັງຫລາຍໄວ້ໃຫ້ໝັ້ນຄົງຢູ່ໃນຄວາມບໍ-
ລິສຸດ ໂດຍບໍ່ມີຂໍ້ຕິຕຽນໄດ້ຕໍ່ພຣະພັກພຣະເຈົ້າຄືພຣະບິດາຂອງເຮົາທັງຫລາຍ ໃນເມື່ອພຣະ-
ເຢຊູເຈົ້າຂອງພວກເຮົາຈະສະເດັດມາປະກົດ ກັບໄພ່ພົນທັງປວງຂອງພຣະອົງ.

# ບົດທີ 4

## ຊີວິດທີ່ພໍພຣະໄທພຣະເຈົ້າ

[1]ພີ່ນ້ອງທັງຫລາຍເອີຍ, ທ້າຍສຸດນີ້ພວກເຮົາວອນຂໍແລະເຕືອນສະຕິເຈົ້າທັງຫລາຍ ໃນພຣະ-
ນາມຂອງພຣະເຢຊູເຈົ້າວ່າ ພວກເຈົ້າໄດ້ຮຽນຈາກເຮົາແລ້ວ່າຈຳເປັນຕ້ອງດຳເນີນຊີວິດຢ່າງໃດ
ຈຶ່ງຈະເປັນທີ່ພໍພຣະໄທພຣະເຈົ້າ ເໝືອນດັ່ງພວກເຈົ້າກຳລັງປະຕິບັດຢູ່ແລ້ວ ກໍຈົ່ງປະຕິບັດດັ່ງ-
ນັ້ນໃຫ້ຫລາຍກວ່າເກົ່າ. [2]ດ້ວຍວ່າເຈົ້າທັງຫລາຍຮູ້ຈັກຂໍ້ຄວາມທັງຫລາຍ ທີ່ພວກເຮົາໄດ້ສັ່ງໄວ້
ແກ່ພວກເຈົ້າໃນພຣະນາມຂອງພຣະເຢຊູເຈົ້າແລ້ວ. [3]ອັນນີ້ແຫລະ, ເປັນນ້ຳພຣະໄທຂອງພຣະ-
ເຈົ້າຄືໃຫ້ເຈົ້າທັງຫລາຍເປັນຄົນບໍລິສຸດ, ໃຫ້ພວກເຈົ້າລະເວັ້ນຈາກການຜິດຊາຍຍິງ. [4]ໃຫ້ເຈົ້າ
ທຸກຄົນຮູ້ຈັກມີເມຍໃນທາງບໍລິສຸດ[ກ] ແລະໃນທາງນັບຖື. [5]ບໍ່ໃຊ້ດ້ວຍລາຄະຕັນຫາຕາມດັ່ງພວກ
ນອກຊາດທີ່ບໍ່ຮູ້ຈັກພຣະເຈົ້າ. [6]ຢ່າໃຫ້ຜູ້ໃດລ່ວງເກີນແລະເຮັດຜິດຕໍ່ພີ່ນ້ອງຂອງຕົນໃນເລື່ອງນີ້
ເພາະວ່າອົງພຣະຜູ້ເປັນເຈົ້າເປັນຜູ້ຊົງແກ້ແຄ້ນຄົນທີ່ເຮັດຜິດແນວນັ້ນ ຕາມດັ່ງພວກເຮົາໄດ້
ບອກພວກເຈົ້າຢ່າງໜັກແໜ້ນໄວ້ກ່ອນແລ້ວ. [7]ເພາະວ່າພຣະເຈົ້າບໍ່ໄດ້ຊົງເອີ້ນພວກເຈົ້າໃຫ້ເປັນ
ຄົນຊົ່ວຮ້າຍ ແຕ່ວ່າເພື່ອໃຫ້ເປັນຄົນບໍລິສຸດ. [8]ສັນນັ້ນຜູ້ທີ່ຝ່າຝືນນັ້ນກໍບໍ່ຝ່າຝືນຕໍ່ມະນຸດ ແຕ່ຝ່າ-
ຝືນຕໍ່ພຣະເຈົ້າ ຜູ້ຊົງໂຜດປະທານພຣະວິນຍານບໍລິສຸດຂອງພຣະອົງໃຫ້ແກ່ເຈົ້າທັງຫລາຍ.
[9]ສ່ວນເລື່ອງການຮັກພີ່ນ້ອງທັງຫລາຍນັ້ນ, ເຮົາບໍ່ຈຳເປັນຈະຂຽນຝາກມາໃຫ້ພວກເຈົ້າ ເພາະ
ເຈົ້າເອງກໍໄດ້ຮັບການຊົງສັ່ງສອນຈາກພຣະເຈົ້າແລ້ວວ່າ ໃຫ້ຮັກກັນແລະກັນ. [10]ທີ່ຈິງ, ເຈົ້າ
ທັງຫລາຍກຳລັງເຮັດດັ່ງນັ້ນແກ່ພວກພີ່ນ້ອງທັງປວງຕະຫລອດທົ່ວແຂວງມາເກໂດເນຍ ແລ້ວ
ແຕ່ພີ່ນ້ອງເອີຍ, ພວກເຮົາເຕືອນສະຕິເຈົ້າທັງຫລາຍໃຫ້ເຮັດດັ່ງນັ້ນຫລາຍກວ່າເກົ່າ. [11]ແລະຈົ່ງ
ຕັ້ງເປົ້າໝາຍວ່າຈະຢູ່ຢ່າງສະຫງົບ, ເຮັດການກ່ຽວກັບກິດທຸລະສ່ວນຕົວຂອງຕົນ, ທັງເຮັດວຽກ
ດ້ວຍມືຂອງຕົນເອງ, ຕາມດັ່ງພວກເຮົາໄດ້ສັ່ງເຈົ້າທັງຫລາຍໄວ້ແລ້ວ. [12]ເພື່ອການດຳເນີນຊີວິດ
ຂອງພວກເຈົ້າຈະເປັນທີ່ນັບຖືແກ່ຄົນພາຍນອກ ແລ້ວພວກເຈົ້າຈະບໍ່ຕ້ອງອາໃສຄົນອື່ນ.

[ກ]ຫລືວ່າ “ຮູ້ຈັກບັງຄັບເນື້ອຕົວໃນຄວາມບໍລິສຸດ.”

## ຖານະຂອງຄົນຕາຍແລະຄົນເປັນໃນວັນທີ່ພຣະເຢຊູຈະສະເດັດກັບມາ

13ພີ່ນ້ອງທັງຫລາຍເອີຍ, ພວກເຮົາຢາກໃຫ້ເຈົ້າທັງຫລາຍຮູ້ຄວາມຈິງເລື່ອງຄົນທີ່ຫລັບໄປນັ້ນ
ເພື່ອພວກເຈົ້າຈະບໍ່ໂສກເສົ້າເໝືອນດັ່ງຄົນອື່ນທີ່ບໍ່ມີຄວາມຫວັງ. 14ເພາະໃນເມື່ອເຮົາເຊື່ອວ່າ
ພຣະເຢຊູຊົງສິ້ນພຣະຊົນແລະຊົງຄືນພຣະຊົນແລ້ວ ໂດຍພຣະເຢຊູນັ້ນແຫລະ, ພຣະເຈົ້າຈະ
ຊົງນຳບັນດາຄົນທີ່ຫລັບໄປແລ້ວນັ້ນ ໃຫ້ມາກັບພຣະອົງ. 15ໃນຂໍ້ນີ້ເຮົາບອກເຈົ້າທັງຫລາຍຕາມ
ພຣະທຳຂອງອົງພຣະຜູ້ເປັນເຈົ້າວ່າ ພວກເຮົາຜູ້ຍັງເປັນຢູ່ແລະຄອຍຖ້າການສະເດັດມາຂອງອົງ
ພຣະຜູ້ເປັນເຈົ້າ ເຮົາຈະລ່ວງໜ້າໄປກ່ອນພວກຄົນທີ່ຫລັບໄປແລ້ວນັ້ນກໍບໍ່ໄດ້ແທ້. 16ດ້ວຍວ່າ
ຈະມີຄຳສັ່ງອັນດັງ, ຈະມີສຽງຂອງອັກຄະເທວະດາ, ແລະສຽງແກຂອງພຣະເຈົ້າ ແລ້ວອົງ
ພຣະຜູ້ເປັນເຈົ້າຈະສະເດັດລົງມາຈາກສະຫວັນ ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວກໍ
ຈະຄືນຂຶ້ນມາກ່ອນ. 17ຫລັງຈາກນັ້ນເຮົາທັງຫລາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກ
ພ້ອມກັນກັບຄົນພວກນັ້ນ ແລະຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແຫລະ, ພວກ
ເຮົາກໍຈະຢູ່ນຳພຣະຜູ້ເປັນເຈົ້າເປັນນິດ. 18ເຫດສັນນັ້ນຈົ່ງເລົ້າໂລມອອຍໃຈກັນແລະກັນ[ກ] ດ້ວຍ
ຂໍ້ຄວາມທັງຫລາຍນີ້ເທີ້ນ.

# ບົດທີ 5

## ຈົ່ງຈັດຕຽມພ້ອມພຽງກັນເມື່ອພຣະເຢຊູສະເດັດກັບມາ

1ພີ່ນ້ອງທັງຫລາຍເອີຍ, ເລື່ອງເວລາແລະວັນທີ່ຊົງກຳນົດໄວ້ນັ້ນ ບໍ່ຈຳເປັນຕ້ອງຂຽນບອກໃຫ້
ພວກເຈົ້າຮູ້. 2ເພາະວ່າເຈົ້າເອງຮູ້ດີແລ້ວວ່າ ວັນຂອງອົງພຣະຜູ້ເປັນເຈົ້າຈະມາເໝືອນຂະໂມຍ
ມາໃນເວລາກາງຄືນ. 3ເມື່ອໃດເຂົາຫາກເວົ້າວ່າ “ສະຫງົບສຸກແລະປອດໄພຢູ່ແລ້ວ” ເມື່ອນັ້ນ
ແຫລະ, ຄວາມວິນາດຈິບຫາຍກໍຈະມາເຖິງເຂົາໃນທັນທີ ເໝືອນດັ່ງຄວາມເຈັບປວດມາເຖິງຍິງ
ທີ່ມີທ້ອງ ແລະເຂົາຈະໜີບໍ່ພົ້ນເປັນແນ່. 4ແຕ່ວ່າພີ່ນ້ອງເອີຍ, ພວກເຈົ້າກໍບໍ່ໄດ້ຢູ່ໃນຄວາມມືດ
ແລ້ວ ເໝືອນວັນນັ້ນຈະມາໂດດໃສ່ເຈົ້າເໝືອນດັ່ງຂະໂມຍມາ. 5ເຫດວ່າເຈົ້າທັງປວງເປັນຝ່າຍ
ຄວາມສະຫວ່າງແລະຝ່າຍກາງເວັນ ພວກເຮົາບໍ່ເປັນຝ່າຍກາງຄືນຫລືຝ່າຍຄວາມມືດ. 6ສັນນັ້ນ
ແຫລະ, ຢ່າໃຫ້ເຮົາທັງຫລາຍຫລັບຢູ່ເໝືອນດັ່ງຄົນອື່ນ ແຕ່ໃຫ້ເຮົາເຝົ້າລະວັງແລະຢ່າເມົາມົວ.
7ເພາະວ່າຄົນທີ່ນອນຫລັບກໍນອນຫລັບໃນກາງຄືນແລະຄົນເມົາເຫລົ້າກໍເມົາໃນກາງຄືນ. 8ແຕ່
ສ່ວນພວກເຮົາຜູ້ເປັນຝ່າຍກາງເວັນຢ່າໃຫ້ເຮົາເມົາມົວຢູ່ ຈົ່ງສຸບເອົາຄວາມເຊື່ອແລະຄວາມຮັກ
ເປັນເຄື່ອງປ້ອງກັນໜ້າເອິກໄວ້ ແລະເອົາຄວາມໄວ້ໃຈວ່າຈະໄດ້ພົ້ນເປັນເຄື່ອງຄຽນປ້ອງຫົວໄວ້.
9ເຫດວ່າພຣະເຈົ້າບໍ່ໄດ້ຊົງຕັ້ງແຕ່ງເຮົາທັງຫລາຍໄວ້ສຳລັບພຣະພິໂລດ ແຕ່ວ່າເພື່ອຈະໄດ້ຮັບ
ຄວາມພົ້ນດ້ວຍທາງພຣະເຢຊູຄຣິດເຈົ້າຂອງພວກເຮົາ. 10ຜູ້ໄດ້ຊົງສະຫລະພຣະຊົນເພື່ອພວກ
ເຮົາທັງຫລາຍ ເພື່ອວ່າເຖິງແມ່ນເຮົາຈະຕື່ນຫລືຫລັບຢູ່ກໍດີ ເຮົາທັງຫລາຍຈະໄດ້ມີຊີວິດດ້ວຍກັນ
ກັບພຣະອົງ. 11ດ້ວຍເຫດນັ້ນຈົ່ງເລົ້າໂລມອອຍໃຈກັນແລະກັນ[ຂ] ແລະຈົ່ງຊ່ອຍກັນໃຫ້ມີຄວາມ
ຈະເລີນຂຶ້ນຕາມດັ່ງເຈົ້າທັງຫລາຍເຮັດຢູ່ນັ້ນ.

[ກ]ຫລືວ່າ “ຈົ່ງຊູກຳລັງໃຈກັນແລະກັນ.”
[ຂ]ຫລືວ່າ “ຈົ່ງຊູກຳລັງໃຈກັນແລະກັນ.”

## ຄວາມເຕືອນສະຕິເທື່ອສຸດທ້າຍ

12ພີ່ນ້ອງທັງຫລາຍເອີຍ, ພວກເຮົາວອນຂໍໃຫ້ເຈົ້າທັງຫລາຍຮັບຮູ້ຄົນທີ່ເຮັດການໜັກໜ່ວງຢູ່
ຖ້າມກາງພວກເຈົ້າ ຄືຜູ້ຄຸ້ມຄອງແລະເຕືອນສະຕິພວກເຈົ້າໃນພຣະນາມຂອງອົງພຣະຜູ້ເປັນ-
ເຈົ້າ. 13ຈົ່ງນັບຖືແລະຮັກເຂົາຢ່າງຫລາຍທີ່ສຸດ ເພາະເນື່ອງດ້ວຍການງານຂອງເຂົານັ້ນ ຈົ່ງຢູ່
ຮ່ວມກັນດ້ວຍຄວາມສະຫງົບສຸກ. 14ພີ່ນ້ອງທັງຫລາຍເອີຍ, ພວກເຮົາວອນຂໍພວກເຈົ້າໃຫ້ເຕືອນ
ສະຕິຄົນທີ່ບໍ່ຢູ່ໃນລະບຽບ ຈົ່ງຊູໃຈຜູ້ທີ່ນ້ອຍໃຈ, ຈົ່ງຊ່ອຍເຫລືອຜູ້ທີ່ອ່ອນກຳລັງ, ຈົ່ງອົດທົນຕໍ່
ຄົນທັງປວງ. 15ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໃດເຮັດຊົ່ວຕອບແທນການຊົ່ວ ແຕ່ວ່າຈົ່ງສະແຫວງຫາ
ທາງເຮັດດີຕໍ່ກັນແລະກັນຢູ່ສະເໝີ ແລະຕໍ່ຄົນທັງປວງດ້ວຍ. 16ຈົ່ງຊົມຊື່ນຍິນດີຢູ່ສະເໝີ. 17ຈົ່ງ
ອ້ອນວອນຢູ່ບໍ່ຂາດ. 18ຈົ່ງຂອບພຣະຄຸນໃນທຸກສິ່ງ ເພາະວ່ານີ້ແຫລະ, ເປັນນ້ຳພຣະໄທຂອງ
ພຣະເຈົ້າ ຊຶ່ງປະກົດໃນພຣະເຢຊູຄຣິດສຳລັບເຈົ້າທັງຫລາຍ. 19ຢ່າຫັກຫ້າມພຣະວິນຍານ.
20ຢ່າປະໝາດຄຳທຳນວາຍ. 21ແຕ່ຈົ່ງທົດລອງເບິ່ງທຸກສິ່ງ ສິ່ງໃດດີຈົ່ງຍຶດຖືໄວ້ໃຫ້ໝັ້ນ. 22ຈົ່ງ
ເວັ້ນຈາກຄວາມຊົ່ວທຸກຊະນິດ.

23ຂໍໃຫ້ພຣະເຈົ້າຜູ້ຊົງໂຜດປະທານສັນຕິສຸກນັ້ນ ຈົ່ງຊົງບັນດານໃຫ້ເຈົ້າທັງຫລາຍເປັນຄົນບໍ-
ລິສຸດຮຽບຮ້ອຍ ແລະຊົງຮັກສາວິນຍານ, ຈິດໃຈ, ແລະກາຍຂອງພວກເຈົ້າໄວ້ບໍ່ໃຫ້ມີຂໍ້ຕິຕຽນໄດ້
ໃນເມື່ອອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ຄືພຣະເຢຊູຄຣິດຈະສະເດັດມາປະກົດ.
24ພຣະອົງຜູ້ຊົງເອີ້ນເອົາເຈົ້າທັງຫລາຍນັ້ນກໍທ່ຽງທຳ ພຣະອົງນັ້ນແຫລະ, ຈະຊົງດຳເນີນງານ.
25ພວກພີ່ນ້ອງເອີຍ, ຈົ່ງອ້ອນວອນສຳລັບພວກເຮົາເທີ້ນ. 26ຂໍຄຳນັບພີ່ນ້ອງທັງປວງດ້ວຍທຳນຽມ
ຈູບອັນບໍລິສຸດ. 27ເຮົາບັນຊາເຈົ້າທັງຫລາຍໃນພຣະນາມຂອງອົງພຣະຜູ້ເປັນເຈົ້າວ່າ ໃຫ້ພວກ
ເຈົ້າອ່ານຈົດໝາຍສະບັບນີ້ໃຫ້ພີ່ນ້ອງທັງປວງຟັງ. 28ຂໍໃຫ້ພຣະຄຸນຂອງພຣະເຢຊູຄຣິດເຈົ້າຂອງ
ພວກເຮົາສະຖິດຢູ່ກັບເຈົ້າທັງຫລາຍເທີ້ນ.

* * *

# ຈົດໝາຍຂອງໂປໂລ ທີ່ມີຊຽນໄປເຖິງຄຣິສຕະຈັກໃນເມືອງ ເທຊະໂລນິກ ສະບັບທີສອງ

## ບົດທີ 1

1ໂປໂລ ກັບຊີລາວານ ແລະ ຕີໂມທຽວ ເຖິງ ຄຣິສຕະຈັກຂອງຊາວ ເທຊະໂລນິກ ໃນ ພຣະບິດາ
ເຈົ້າຂອງເຮົາທັງຫລາຍ ແລະໃນ ພຣະເຢຊູຄຣິດ ເຈົ້າ. 2ຂໍໃຫ້ພຣະຄຸນແລະສັນຕິສຸກ ຊຶ່ງມາຈາກ
ພຣະບິດາ ເຈົ້າແລະຈາກ ພຣະເຢຊູຄຣິດ ເຈົ້າ ຈົ່ງມີແກ່ເຈົ້າທັງຫລາຍເທີ້ນ.

### ການພິພາກສາເມື່ອພຣະຄຣິດສະເດັດກັບມາ

3ພີ່ນ້ອງທັງຫລາຍເອີຍ, ພວກເຮົາຈຳເປັນຕ້ອງຂອບພຣະຄຸນ ພຣະເຈົ້າ ເພາະເຈົ້າທັງຫລາຍຢູ່
ສະເໝີ ແລະເປັນການສົມຄວນຢູ່ ດ້ວຍວ່າຄວາມເຊື່ອຂອງພວກເຈົ້າກໍຈະເລີນຫລາຍຂຶ້ນ ແລະ
ຄວາມຮັກທີ່ມີຕໍ່ກັນຂອງເຈົ້າທຸກຄົນກໍທະວີຂຶ້ນຢ່າງຫລວງຫລາຍດ້ວຍ. 4ຈົນວ່າພວກເຮົາໄດ້ຍົກ
ເອົາເຈົ້າທັງຫລາຍຂຶ້ນມາ ອວດໃນຖ້າມກາງໝູ່ຄຣິສຕະຈັກຂອງ ພຣະເຈົ້າ ເພາະເຫດຄວາມ
ພາກພຽນຂອງພວກເຈົ້າ ແລະຍ້ອນຄວາມເຊື່ອໃນເວລາພວກເຈົ້າຖືກຂົ່ມເຫງນານາປະການ
ແລະອົດທົນຄວາມທຸກລຳບາກຢູ່ນັ້ນ.

5ເລື່ອງນີ້ສະແດງໃຫ້ເຫັນແຈ້ງເຖິງການຊົງພິພາກສາອັນຍຸດຕິທຳຂອງ ພຣະເຈົ້າ ເພື່ອເຈົ້າທັງ-
ຫລາຍຈະໄດ້ຊົງຖືວ່າ ເປັນຜູ້ສົມຄວນກັບພຣະລາຊະອານາຈັກຂອງ ພຣະເຈົ້າ ເພາະເຫັນແກ່
ລາຊະອານາຈັກນັ້ນແຫລະ, ພວກເຈົ້າຈຶ່ງອົດທົນຄວາມທຸກລຳບາກຢູ່. 6ເພາະວ່າ ພຣະເຈົ້າ ຊົງ
ເຫັນວ່າເປັນການຍຸດຕິທຳແລ້ວ ທີ່ຈະຊົງເອົາຄວາມຍາກລຳບາກໄປຕອບແທນຄົນເຫລົ່ານັ້ນ ທີ່
ກໍ່ຄວາມຍາກລຳບາກໃຫ້ແກ່ພວກເຈົ້າ. 7ແລະທີ່ຈະຊົງໂຜດໃຫ້ເຈົ້າທັງຫລາຍຜູ້ຖືກຄວາມຍາກ
ລຳບາກນັ້ນໄດ້ຮັບຄວາມບັນເທົາດ້ວຍກັນກັບພວກເຮົາ ເມື່ອເວລາ ພຣະເຢຊູເຈົ້າ ຈະຊົງປະກົດ
ຈາກຟ້າສະຫວັນ ໃນແປວໄຟອັນຮ້ອນກ້າພ້ອມດ້ວຍໝູ່ເທວະດາຕົນມີລິດຂອງພຣະອົງ, 8ເພື່ອ
ຈະລົງໂທດຕອບແທນຄົນທັງປວງທີ່ບໍ່ຮູ້ຈັກ ພຣະເຈົ້າ ແລະແກ່ຄົນທີ່ບໍ່ຍອມເຊື່ອຟັງຂ່າວປະເສີດ
ເລື່ອງ ພຣະເຢຊູເຈົ້າ ຂອງເຮົາທັງຫລາຍ. 9ຄົນພວກນັ້ນຈະໄດ້ຖືກໂທດ ຄືຄວາມວິນາດຈິບຫາຍ
ເປັນນິດ ແລະແຍກຫ່າງຈາກພຣະພັກຂອງ ພຣະຜູ້ເປັນເຈົ້າ ແລະຈາກລິດທານຸພາບອັນຮຸ່ງເຮືອງ
ຂອງພຣະອົງ. 10ໃນວັນນັ້ນ, ຄືເມື່ອພຣະອົງຈະສະເດັດມາເພື່ອຊົງຮັບພຣະກຽດຕິຍົດ ເພາະ
ພວກໄພ່ພົນທັງປວງຂອງພຣະອົງ ແລະເພື່ອໃຫ້ເປັນທີ່ນິຍົມຊົມຊື່ນແກ່ຄົນທັງປວງທີ່ໄດ້ເຊື່ອ
(ເພາະເຈົ້າທັງຫລາຍໄດ້ເຊື່ອຄຳພະຍານຂອງພວກເຮົາແລ້ວ). 11ເພາະເຫດສັນນັ້ນແຫລະ,
ພວກເຮົາຈຶ່ງອ້ອນວອນສຳລັບເຈົ້າທັງຫລາຍຢູ່ສະເໝີ ຂໍໃຫ້ພຣະເຈົ້າຂອງເຮົາທັງຫລາຍຊົງໂຜດ
ຖືວ່າ ພວກເຈົ້າເປັນຜູ້ເໝາະສົມແກ່ການທີ່ພຣະອົງຊົງເອີ້ນເອົານັ້ນ ແລະຂໍຊົງບັນດານດ້ວຍລິດ
ອຳນາດຂອງພຣະອົງໃຫ້ຄວາມຕັ້ງໃຈດີທຸກປະການ ກັບການງານຂອງຄວາມເຊື່ອທຸກຢ່າງໃຫ້
ສຳເລັດ. 12ເພື່ອພຣະນາມຂອງ ພຣະເຢຊູເຈົ້າ ຂອງເຮົາທັງຫລາຍ ຈະໄດ້ຮັບກຽດຕິຍົດເພາະ

ພວກເຈົ້າແລະເພື່ອພວກເຈົ້າຈະໄດ້ກຽດຕິຍົດເພາະພຣະອົງ ຕາມພຣະຄຸນແຫ່ງພຣະເຈົ້າຂອງ
ເຮົາທັງຫລາຍແລະແຫ່ງພຣະເຢຊູຄຣິດເຈົ້າ.

# ບົດທີ 2

## ຜູ້ຊົ່ວອະທຳ

1ພວກພີ່ນ້ອງເອີຍ, ເລື່ອງການທີ່ພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍຈະສະເດັດມາ ແລະ
ການທີ່ພຣະອົງຈະຊົງຮວບຮວມພວກເຮົາໄປເປັນຂອງພຣະອົງນັ້ນ ເຮົາວອນຂໍພວກເຈົ້າວ່າ.
2ຢ່າໃຫ້ໃຈຂອງເຈົ້າທັງຫລາຍປັ່ນປ່ວນໂດຍງ່າຍ ຫລືສະທ້ານຕົກໃຈ ບໍ່ວ່າຈະມາດ້ວຍທາງວິນ
ຍານ ຫລືມາທາງຄຳເວົ້າ, ຫລືທາງຈົດໝາຍທີ່ອ້າງວ່າມາຈາກເຮົາ ໂດຍອ້າງວ່າວັນຂອງອົງ
ພຣະຜູ້ເປັນເຈົ້າມາເຖິງແລ້ວ. 3ຢ່າໃຫ້ໃຜຫລອກລວງເຈົ້າທັງຫລາຍດ້ວຍທາງໜຶ່ງທາງໃດ
ເພາະວ່າວັນນັ້ນຈະບໍ່ທັນມາເຖິງ ຈົນກວ່າຈະມີການທໍລະຍົດເກີດຂຶ້ນເສຍກ່ອນ ແລະຜູ້ຊົ່ວຮ້າຍ
ນັ້ນ ຈະອອກມາປະກົດຄືຜູ້ຖືກຊົງໝາຍໄວ້ສຳລັບຄວາມວິນາດຈົບຫາຍ. 4ຄືຜູ້ຄັດຄ້ານ ແລະຍົກ
ຕົວຂຶ້ນຕໍ່ສູ້ທຸກໆສິ່ງທີ່ມີຊື່ວ່າເປັນພຣະເຈົ້າ ຫລືທີ່ເຂົາໄຫວ້ນະມັດສະການນັ້ນ ມັນຈຶ່ງຈະໄດ້ນັ່ງ
ລົງໃນພຣະວິຫານຂອງພຣະເຈົ້າ ສະແດງຕົວເປັນເໝືອນພຣະເຈົ້າ. 5ເຈົ້າທັງຫລາຍບໍ່ຈື່ຫລືວ່າ
ເມື່ອເຮົາຍັງຢູ່ນຳພວກເຈົ້າ ເຮົາກໍເຄີຍບອກສິ່ງທັງຫລາຍນີ້ໃຫ້ເຈົ້າຮູ້ຢູ່ແລ້ວ. 6ແລະເຈົ້າທັງ-
ຫລາຍກໍຮູ້ຈັກສິ່ງທີ່ກຳລັງໜ່ວງມັນໄວ້ໃນເວລານີ້ ຈົນກວ່າມັນຈະອອກມາປະກົດໄດ້ຕາມເວລາ
ກຳນົດຂອງມັນ. 7ເພາະວ່າການຊົ່ວຮ້າຍອັນເລິກລັບກໍກຳລັງເຮັດລັບໆ ຢູ່ ແຕ່ຜູ້ທີ່ໜ່ວງມັນຢູ່
ດຽວນີ້ນັ້ນຈະຍັງໜ່ວງຢູ່ ຈົນກວ່າຈະໄດ້ອອກໄປແລ້ວ. 8ຂະນະນັ້ນແຫລະ, ຜູ້ຊົ່ວຮ້າຍນັ້ນ[ກ]
ຈະປະກົດຕົວ ແລະພຣະເຢຊູເຈົ້າຈະຊົງປະຫານມັນເສຍດ້ວຍລົມພຣະໂອດຂອງພຣະອົງ ແລະ
ຈະຊົງລ້າງຜານມັນໃຫ້ສູນຫາຍໄປດ້ວຍຄວາມຮຸ່ງເຮືອງ ທີ່ຈະສ່ອງປະກົດໃນເວລາພຣະອົງສະ-
ເດັດມານັ້ນ. 9ຜູ້ຊົ່ວຮ້າຍນັ້ນ ຈະມາດ້ວຍການດົນບັນດານຂອງຊາຕານ ພ້ອມດ້ວຍລິດອຳນາດ
ທຸກຢ່າງ ແລະດ້ວຍໝາຍສຳຄັນກັບການອັດສະຈັນທີ່ຫລອກລວງ. 10ແລະອຸບາຍອັນຊົ່ວຮ້າຍ
ທຸກຢ່າງ ສຳລັບຄົນພວກນັ້ນທີ່ກຳລັງຈິບຫາຍໄປ ເພາະເຂົາບໍ່ໄດ້ຍອມຮັບຄວາມຈິງທີ່ຈະໃຫ້
ພວກເຂົາພົ້ນໄດ້. 11ດ້ວຍເຫດນີ້ແຫລະ, ພຣະເຈົ້າຈຶ່ງຊົງໃຫ້ອິດທິພົນອັນຫລອກລໍ້ນັ້ນເຮັດການ
ຢູ່ພາຍໃນ ເພື່ອໃຫ້ພວກເຂົາເຊື່ອຄວາມບໍ່ຈິງ. 12ເພື່ອພວກຄົນທີ່ບໍ່ເຊື່ອຄວາມຈິງ ແຕ່ຍິນດີໃນ
ການຊົ່ວຮ້າຍ ຈະໄດ້ຖືກພິພາກສາລົງໂທດກັນໝົດທຸກຄົນ.

## ຖືກຊົງເລືອກໄວ້ສຳລັບຄວາມພົ້ນ

13ພວກພີ່ນ້ອງຜູ້ເປັນທີ່ຮັກຂອງພຣະອົງເຈົ້າເອີຍ, ເຮົາຈຳເປັນຕ້ອງຂອບພຣະຄຸນພຣະເຈົ້າ
ເພາະເຈົ້າທັງຫລາຍຢູ່ສະເໝີ ເພາະວ່າພຣະເຈົ້າໄດ້ຊົງເລືອກພວກເຈົ້າໄວ້ຕັ້ງແຕ່ຕົ້ນເດີມ ເພື່ອ
ຊົງໂຜດໃຫ້ພົ້ນໂດຍພຣະວິນຍານຊົງຊຳລະເຈົ້າໃຫ້ບໍລິສຸດ ແລະໂດຍທີ່ເຈົ້າໄດ້ເຊື່ອຄວາມຈິງ.
14ພຣະອົງໄດ້ຊົງເອີ້ນເອົາພວກເຈົ້າໃຫ້ມາເຖິງຄວາມພົ້ນນັ້ນໂດຍທາງຂ່າວປະເສີດຂອງເຮົາເພື່ອ
ຈະໄດ້ຮັບຍົດຖາບັນດາສັກຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ. 15ເຫດສັນນັ້ນແຫລະ

[ກ]ຫລື "ຜູ້ບອກກົດໝາຍນັ້ນ." ຫລື "ຜູ້ຊົ່ວອະທຳນັ້ນ."

ພີ່ນ້ອງເອີຍ, ຈົ່ງຕັ້ງໝັ້ນຄົງຢູ່ແລະຍຶດຖືເອົາຄຳສອນທີ່ສືບມາ ຊຶ່ງພວກເຮົາໄດ້ສອນພວກເຈົ້ານັ້ນ
ບໍ່ວ່າຈະເປັນທາງວາຈາຫລືທາງຈົດໝາຍຂອງພວກເຮົາກໍດີ. [16]ຂໍໃຫ້ອົງ ພຣະເຢຊູຄຣິດ ເຈົ້າຂອງ
ເຮົາທັງຫລາຍ ແລະ ພຣະບິດາ ເຈົ້າຂອງພວກເຮົາ ຜູ້ຊົງຮັກເຮົາທັງຫລາຍ ແລະຊົງໂຜດປະ-
ທານໃຫ້ພວກເຮົາມີຄວາມຊູໃຈເປັນນິດ ແລະຄວາມຫວັງໃຈອັນດີໂດຍພຣະຄຸນນັ້ນ. [17]ຊົງຊູໃຈ
ແລະຕັ້ງເຈົ້າໄວ້ໃຫ້ໝັ້ນຄົງໃນການງານແລະໃນວາຈາອັນດີທຸກຢ່າງ.

# ບົດທີ 3

## ຈົ່ງອ້ອນວອນສຳລັບພວກເຮົາ

[1]ພີ່ນ້ອງທັງຫລາຍເອີຍ, ທ້າຍສຸດນີ້ ຈົ່ງອ້ອນວອນສຳລັບພວກເຮົາ ເພື່ອພຣະທຳຂອງ ພຣະ-
ຜູ້ເປັນເຈົ້າ ຈະໄດ້ແຜ່ໄປ ແລະຈະໄດ້ຮັບຄວາມຍ້ອງຍໍສັລະເສີນ ເໝືອນດັ່ງທີ່ໄດ້ເປັນໄປໃນ
ທ່າມກາງພວກເຈົ້າແລ້ວ. [2]ແລະເພື່ອພວກເຮົາຈະໄດ້ຖືກຊົງໂຜດໃຫ້ພົ້ນຈາກຄົນພານຊົ່ວຮ້າຍ
ເພາະວ່າຄົນທີ່ເຊື່ອນັ້ນບໍ່ແມ່ນທຸກຄົນ. [3]ແຕ່ວ່າອົງ ພຣະຜູ້ເປັນເຈົ້າ ຊົງທ່ຽງທຳ ພຣະອົງຈະຊົງ
ຕັ້ງພວກເຈົ້າໃຫ້ໝັ້ນຄົງ ທັງຈະຄຸ້ມຄອງປ້ອງກັນເຈົ້າໄວ້ຈາກສິ່ງຊົ່ວຮ້າຍນັ້ນ.[ກ] [4]ພວກເຮົາມີ
ຄວາມໄວ້ວາງໃຈໃນເຈົ້າທັງຫລາຍເນື່ອງຈາກ ພຣະຜູ້ເປັນເຈົ້າ ວ່າ ພວກເຈົ້າກຳລັງເຮັດແລະຈະ
ເຮັດຕໍ່ໄປຕາມທີ່ເຮົາໄດ້ສັ່ງພວກເຈົ້າແລ້ວ. [5]ຂໍໃຫ້ອົງ ພຣະຜູ້ເປັນເຈົ້າ ຊົງນຳໃຈເຈົ້າທັງຫລາຍໄປ
ເຖິງຄວາມຮັກຂອງ ພຣະເຈົ້າ ແລະເຖິງການພາກພຽນຂອງ ພຣະຄຣິດ.

## ຄວາມຈຳເປັນຕ້ອງເຮັດການ

[6]ພີ່ນ້ອງທັງຫລາຍເອີຍ, ພວກເຮົາສັ່ງເຈົ້າທັງຫລາຍໃນພຣະນາມຂອງ ພຣະເຢຊູຄຣິດ ເຈົ້າວ່າ
ຈົ່ງຜີກອອກຈາກພີ່ນ້ອງທຸກຄົນທີ່ດຳເນີນຊີວິດນອກລະບຽບ ແລະບໍ່ເຮັດຕາມຄຳສອນທີ່ສືບມາ
ຊຶ່ງພວກເຮົາໄດ້ສອນພວກເຈົ້າແລ້ວນັ້ນ. [7]ເຫດວ່າຕົວເຈົ້າທັງຫລາຍເອງກໍຮູ້ຢູ່ແລ້ວວ່າ ຈຳເປັນ
ຕ້ອງ ເອົາຕາມແບບຢ່າງຂອງ ເຮົາ ເມື່ອເຮົາຢູ່ໃນທ່າມກາງພວກເຈົ້າເຮົາບໍ່ໄດ້ຢູ່ນອກລະບຽບ.
[8]ເຮົາບໍ່ໄດ້ແກ່ນອາຫານການກິນກັບໃຜ ແຕ່ເຮົາໄດ້ອອກເຫື່ອແຮງເຮັດການໜັກໜ່ວງທັງກາງ-
ເວັນ ແລະກາງຄືນເພື່ອບໍ່ໃຫ້ເປັນພາລະໜັກແກ່ຜູ້ໜຶ່ງຜູ້ໃດໃນພວກເຈົ້າ. [9]ການເປັນດັ່ງນີ້ບໍ່ແມ່ນ
ເພາະເຮົາບໍ່ມີສິດ ແຕ່ວ່າເພື່ອເຮົາຈະເປັນແບບຢ່າງໃຫ້ແກ່ເຈົ້າທັງຫລາຍ ເພື່ອພວກເຈົ້າຈະເອົາ
ຕາມແບບຂອງເຮົາ. [10]ເພາະເມື່ອເວລາເຮົາຍັງຢູ່ນຳພວກເຈົ້າ ເຮົາໄດ້ສັ່ງເຈົ້າແລ້ວວ່າ, “ຖ້າຜູ້ໃດ
ບໍ່ມີນ້ຳໃຈຢາກເຮັດການກໍຢ່າໃຫ້ຜູ້ນັ້ນກິນ.” [11]ດ້ວຍວ່າພວກເຮົາໄດ້ຍິນຂ່າວວ່າ ມີບາງຄົນໃນ
ພວກເຈົ້າຢູ່ນອກລະບຽບບໍ່ເຮັດການຫຍັງ ແຕ່ທຽວຫາຫຍຸ້ງກ່ຽວກັບກິດທຸລະຂອງຄົນອື່ນ. [12]ໃນ
ພຣະນາມ ພຣະເຢຊູຄຣິດ ເຈົ້າ ພວກເຮົາສັ່ງແລະເຕືອນສະຕິຄົນທັງຫລາຍທີ່ເຮັດຢ່າງນັ້ນວ່າ ໃຫ້
ເຂົາເຮັດການດ້ວຍໃຈສະຫງົບແລະກິນອາຫານຂອງຕົນເອງ.[ຂ] [13]ແຕ່ພີ່ນ້ອງເອີຍ, ເຈົ້າທັງ-
ຫລາຍຢ່າອ່ອນກຳລັງໃຈທີ່ຈະເຮັດການດີ. [14]ຖ້າຜູ້ໜຶ່ງຜູ້ໃດບໍ່ຟັງຂໍ້ຄວາມຂອງພວກເຮົາໃນຈົດ-
ໝາຍສະບັບນີ້ ຈົ່ງໝາຍຜູ້ນັ້ນໄວ້ຢ່າຄົບຫາສະມາຄົມກັບຜູ້ນັ້ນເພື່ອລາວຈະໄດ້ລະອາຍ. [15]ແລະ
ຢ່າຖືຜູ້ນັ້ນວ່າເປັນສັດຕູ ແຕ່ຈົ່ງເຕືອນສະຕິເໝືອນດັ່ງພີ່ນ້ອງ.

[ກ]ຫລືວ່າ “ຜູ້ຊົ່ວຮ້າຍນັ້ນ.” [ຂ]ຫລືວ່າ “ລ້ຽງຊີບຂອງຕົນເອງ.”

## ຄຳອວຍພອນ

[16]ຂໍໃຫ້ອົງ ພຣະຜູ້ເປັນເຈົ້າ ຜູ້ຊົງປະທານສັນຕິສຸກ ຊົງໂຜດປະທານສັນຕິສຸກໃຫ້ແກ່ເຈົ້າທັງ-
ຫລາຍທຸກເວລາແລະທຸກຢ່າງ ຂໍໃຫ້ພຣະຜູ້ເປັນເຈົ້າ ຈົ່ງສະຖິດຢູ່ນຳເຈົ້າທັງປວງເທີ້ນ. [17]ຄວາມ
ຄຳນັບນີ້ເປັນລາຍມືຂອງເຮົາ ເຮົາລົງຊື່ໄວ້ວ່າ ໂປໂລ ເປັນເຄື່ອງໝາຍໃນຈົດໝາຍທຸກສະບັບ
ເຮົາເຄີຍຂຽນດັ່ງນີ້ແຫລະ. [18]ຂໍໃຫ້ພຣະຄຸນຂອງ ພຣະເຢຊູຄຣິດ ເຈົ້າຂອງພວກເຮົາສະຖິດຢູ່ນຳ
ເຈົ້າທັງຫລາຍເທີ້ນ.

* * *

# ຈົດໝາຍຂອງໂປໂລ ທີ່ມີໄປເຖິງ
# ຕີໂມທຽວ ສະບັບຕົ້ນ

## ບົດທີ 1

[1]ຈາກ ໂປໂລ ຜູ້ເປັນອັກຄະສາວົກຂອງພຣະເຢຊູຄຣິດ ຕາມພຣະບັນຊາຂອງພຣະເຈົ້າ ຜູ້
ຊົງເປັນພຣະຜູ້ໂຜດໃຫ້ພົ້ນຂອງເຮົາທັງຫລາຍ ແລະພຣະເຢຊູຄຣິດ ຜູ້ຊົງເປັນຄວາມຫວັງຂອງ
ພວກເຮົາ. [2]ເຖິງ ຕີໂມທຽວ ຜູ້ເປັນລູກແທ້ຂອງເຮົາໃນຄວາມເຊື່ອ. ຂໍໃຫ້ພຣະຄຸນແລະພຣະກາ
ລຸນາແລະສັນຕິສຸກ ຊຶ່ງມາຈາກພຣະບິດາເຈົ້າແລະຈາກພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ
ຈົ່ງມີຢູ່ກັບເຈົ້າເທີນ.

### ຕັກເຕືອນເລື່ອງຄຳສອນບໍ່ຈິງ

[3]ເມື່ອເຮົາກຳລັງໄປແຂວງມາເກໂດເນຍນັ້ນ ເຮົາໄດ້ຂໍຮ້ອງເຈົ້າໃຫ້ຄອຍຢູ່ໃນເມືອງເອເຟໂຊ
ເພື່ອຈະໄດ້ສັ່ງຫ້າມລາງຄົນບໍ່ໃຫ້ເຂົາສອນຄຳໂອວາດຢ່າງອື່ນ. [4]ທັງບໍ່ໃຫ້ເຂົາໃສ່ໃຈໃນເລື່ອງນິ-
ຍາຍຕ່າງໆ ແລະເລື່ອງເຊື້ອສາຍອັນບໍ່ຮູ້ສ້ຽງສຸດ ຊຶ່ງເປັນເຫດໃຫ້ເກີດບັນຫາ ແທນທີ່ຈະໃຫ້
ເປັນໄປຕາມແຜນການຂອງພຣະເຈົ້າ ອັນກ່ຽວກັບຄວາມເຊື່ອ. [5]ແຕ່ຈຸດປະສົງຂອງຄວາມສັ່ງ
ຫ້າມນັ້ນ ກໍຄືໃຫ້ມີຄວາມຮັກທີ່ເກີດມາຈາກໃຈອັນບໍລິສຸດ, ແລະຈາກໃຈສຳນຶກກວ່າຕົນຊອບ,
ແລະຈາກຄວາມເຊື່ອອັນຈິງໃຈ. [6]ບາງຄົນກໍໄດ້ຜິດຈຸດປະສົງ ຫລີກໄປຈາກສິ່ງເຫລົ່ານີ້ຫລົງໄປ
ຫາຄວາມເວົ້າທີ່ໄຮ້ປະໂຫຍດ. [7]ແມ່ນວ່າເຂົາບໍ່ເຂົ້າໃຈສິ່ງທີ່ເຂົາກ່າວແລະສິ່ງທີ່ເຂົາຢືນຢັນເຂົາກໍ
ຍັງປາດຖະໜາຈະເປັນຄູສອນພຣະບັນຍັດ.

[8]ເຮົາທັງຫລາຍຮູ້ແລ້ວວ່າພຣະບັນຍັດນັ້ນດີຢູ່ ຖ້າຜູ້ໃດໃຊ້ໃຫ້ຖືກຕ້ອງ. [9]ໂດຍຮູ້ວ່າກົດໝາຍບໍ່
ໄດ້ຕັ້ງໄວ້ສຳລັບຄົນສັດຊື່ສຸດຈະລິດ ແຕ່ໄດ້ຕັ້ງໄວ້ສຳລັບຄົນຕໍ່ໄປນີ້ ຄືຄົນບໍ່ຟັງກົດໝາຍ, ຄົນບໍ່
ຍອມຢູ່ໃຕ້ລະບຽບ, ຄົນບໍ່ນັບຖືພຣະເຈົ້າ, ຄົນຜິດບາບ, ຄົນອະທຳ, ຄົນຢູ່ນອກສາດສະໜາ,
ຄົນຂ້າພໍ່ຕີແມ່, ຄົນຂ້າຄົນ. [10]ຄົນຫລິ້ນຊູ້, ຊາຍຫລິ້ນກັບຊາຍ, ຜູ້ຮ້າຍລັກຄົນ, ຄົນຂີ້ຕົວະ, ຄົນ
ສາບານໂດຍຄຳບໍ່ຈິງ, ແລະສິ່ງອື່ນໆ ທີ່ຂັດກັບຫລັກໂອວາດຄຳສອນ. [11]ຕາມທີ່ມີຢູ່ໃນຂ່າວ
ປະເສີດ ຊຶ່ງກ່າວເຖິງພຣະລັດສະໝີຂອງພຣະເຈົ້າຜູ້ຊົງສະເຫວີຍສຸກ ຄືຂ່າວປະເສີດທີ່ໄດ້ຊົງ
ມອບໄວ້ກັບເຮົາແລ້ວ.

### ຄຳໂມທະນາພຣະຄຸນຂອງໂປໂລໃນເລື່ອງພຣະກະລຸນາ

[12]ເຮົາໂມທະນາພຣະຄຸນພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ ຜູ້ໄດ້ຊົງຊູກຳລັງເຮົາ ດ້ວຍ
ວ່າພຣະອົງຊົງພຣະກະລຸນາຖືວ່າເຮົາເປັນຄົນສັດຊື່ ຈຶ່ງຊົງຕັ້ງເຮົາໄວ້ໃຫ້ປະຕິບັດພຣະລາຊະກິດ
ຂອງພຣະອົງ. [13]ເຖິງແມ່ນວ່າເມື່ອກ່ອນນັ້ນ ເຮົາໄດ້ເປັນຄົນຫຍາບຊ້າ, ຂົ່ມເຫງ, ແລະໝິ່ນປະ-
ໝາດພຣະອົງ ແຕ່ເຮົາຍັງໄດ້ຮັບພຣະກະລຸນາເພາະວ່າເຮົາໄດ້ເຮັດຢ່າງນັ້ນດ້ວຍຄວາມບໍ່ຮູ້ແລະ
ດ້ວຍຄວາມບໍ່ເຊື່ອ. [14]ແລະອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍໄດ້ຊົງໂຜດປະທານພຣະຄຸນ

ໃຫ້ເຮົາຫລາຍເຫລືອລົ້ນ ພ້ອມດ້ວຍຄວາມເຊື່ອແລະຄວາມຮັກຊຶ່ງມີຢູ່ໃນພຣະເຢຊູຄຣິດ. [15]ຄໍານີ້
ເປັນຄໍາສັດຈິງແລະສົມຄວນທີ່ຄົນທັງປວງຈະຮັບໄວ້ ຄືວ່າພຣະເຢຊູຄຣິດໄດ້ສະເດັດເຂົ້າມາໃນ
ໂລກເພື່ອຈະຊົງໂຜດເອົາຄົນບາບໃຫ້ພົ້ນ ແລະໃນຈໍາພວກຄົນບາບນັ້ນແມ່ນເຮົານີ້ແຫລະເປັນຜູ້
ຕົ້ນ. [16]ແຕ່ວ່າເພາະເຫດນີ້ເຮົາຈຶ່ງໄດ້ຮັບພຣະກະລຸນາ ຄືວ່າເພື່ອພຣະເຢຊູຄຣິດຈະໄດ້ຊົງສະ-
ແດງຄວາມອົດກັ້ນພຣະໄທທຸກຢ່າງ ໃຫ້ເຫັນໃນຕົວເຮົາຊຶ່ງເປັນຜູ້ຕົ້ນນັ້ນ ຄືໃຫ້ເປັນແບບຢ່າງຄື
ໃຫ້ເປັນແບບຢ່າງແກ່ພວກຄົນທີ່ເຊື່ອໃນພຣະອົງ ແລ້ວຮັບຊີວິດອັນຕະຫລອດໄປເປັນນິດ.
[17]ພຣະກຽດແລະພຣະລັດສະໝີຈົ່ງມີແກ່ພຣະມະຫາກະສັດ, ຜູ້ຊົງພຣະຈະເລີນຢູ່ເປັນນິດ, ຜູ້ຊົງ
ເປັນອົງອໍາມະຕະ, ຊຶ່ງບໍ່ໄດ້ປະກົດພຣະອົງ, ຜູ້ຊົງເປັນພຣະເຈົ້າແຕ່ອົງດຽວສືບໆ ໄປເປັນນິດ
ອາແມນ.

[18]ຕີໂມທຽວ ລູກຂອງເຮົາເອີຍ, ຂໍ້ຄວາມດັ່ງນີ້ເຮົາໄດ້ຝາກໄວ້ກັບເຈົ້າ ຕາມຄວາມທໍານວາຍ
ທີ່ກ່າວເຖິງເຈົ້າເມື່ອກ່ອນນັ້ນ ເພື່ອຂໍ້ຄວາມທັງຫລາຍນັ້ນຈະເປັນກໍາລັງໃຈໃຫ້ເຈົ້າເຂົ້າໃນການ
ເສິກອັນດີ. [19]ຈົ່ງຍຶດຖືຄວາມເຊື່ອໄວ້ ແລະມີໃຈສໍານຶກວ່າຕົນຊອບ ຊຶ່ງສິ່ງເຫລົ່ານີ້ລາງຄົນໄດ້
ປັດຖິ້ມເສຍ ຄວາມເຊື່ອຂອງເຂົາຈຶ່ງຫລົ້ມຈົມລົງເໝືອນເຮືອແຕກ. [20]ໃນຄົນເຫລົ່ານັ້ນມີຮີເມ-
ນາໂອ ແລະ ອາເລັກຊັນໂດທີ່ເຮົາໄດ້ມອບໄວ້ກັບຊາຕານແລ້ວ ເພື່ອເຂົາຈະໄດ້ຮຽນຮູ້ແລະບໍ່ກ່າວ
ຄໍາຫຍາບຊ້າຕໍ່ພຣະເຈົ້າ.

# ບົດທີ 2

## ຄໍາແນະນໍາກ່ຽວກັບລະບຽບແລະການໄຫວ້ວອນ

[1]ເຫດສັນນັ້ນກ່ອນສິ່ງອື່ນໃດ ເຮົາຂໍຮ້ອງເຈົ້າທັງຫລາຍໃຫ້ອ້ອນວອນ, ໄຫ້ວອນ, ທູນຂໍແລະ
ຂອບພຣະຄຸນເພື່ອຄົນທັງປວງ. [2]ເພື່ອກະສັດທັງຫລາຍ ແລະ ເພື່ອຄົນທັງປວງທີ່ມີຕໍາແໜ່ງສູງ
ເພື່ອເຮົາທັງຫລາຍຈະໄດ້ດໍາເນີນຊີວິດຢ່າງງຽບໆ ແລະສະຫງົບສຸກ ໃນທາງທໍາແລະໂດຍສະ-
ຫງ່າຜ່າເຜີຍທຸກຢ່າງ. [3]ການເຮັດແນວນັ້ນເປັນການດີ ແລະເປັນທີ່ຊອບພຣະໄທພຣະເຈົ້າ ຜູ້ຊົງ
ໂຜດໃຫ້ພົ້ນຂອງເຮົາທັງຫລາຍ, [4]ຜູ້ຊົງມີພຣະປະສົງໃຫ້ຄົນທັງປວງພົ້ນ ແລະໃຫ້ສັງເກດຮູ້
ຄວາມຈິງ. [5]ດ້ວຍເຫດວ່າມີພຣະເຈົ້າອົງດຽວແລະມີຜູ້ກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະ-
ນຸດ ຄືພຣະເຢຊູຄຣິດຜູ້ຊົງສະພາບເປັນມະນຸດ. [6]ຜູ້ໄດ້ຊົງສະຫລະພຣະອົງເອງເປັນຄ່າໄຖສໍາ-
ລັບຄົນທັງປວງ ຊຶ່ງການນີ້ເປັນພະຍານໃນເວລາອັນເໝາະສົມ. [7]ແລະສໍາລັບການນີ້ເຮົາຈຶ່ງໄດ້
ຖືກຊົງຕັ້ງໄວ້ໃຫ້ເປັນຜູ້ປະກາດແລະເປັນອັກຄະສາວົກ (ເຮົາກ່າວຄວາມຈິງ ບໍ່ໄດ້ກ່າວຄໍາຕົວະ)
ແລະເປັນຄູສອນຄວາມເຊື່ອແລະຄວາມຈິງແກ່ຄົນຕ່າງຊາດ. [8]ເຫດສັນນັ້ນເຮົາປະສົງຢາກໃຫ້ຜູ້
ຊາຍທັງຫລາຍໄຫວ້ວອນໃນທຸກແຫ່ງ ດ້ວຍຍໍມືບໍລິສຸດ ໂດຍບໍ່ມີຄວາມຄຽດແລະການຜິດຖຽງ
ກັນ.

[9]ຝ່າຍພວກຜູ້ຍິງກໍເໝືອນກັນ, ໃຫ້ແຕ່ງຕົວຢ່າງສຸພາບຮຽບຮ້ອຍແລະສະຫງ່ຽມຄ່ຽມຄົມ ບໍ່
ແມ່ນດ້ວຍເກົ້າຜົມເກີນແບບ ຫລືປະດັບກາຍດ້ວຍເຄື່ອງຄໍາແລະໄຂ່ມຸກຫລືເຄື່ອງນຸ່ງອັນມີຄ່າ
ແພງ. [10]ແຕ່ໃຫ້ປະດັບກາຍດ້ວຍເຮັດການດີ ໃຫ້ສົມກັບຜູ້ຍິງທີ່ປະກາດຕົນວ່າເປັນຜູ້ນັບຖືພຣະ-

ເຈົ້າ. 11ໃຫ້ຜູ້ຍິງຮຽນຮູ້ຢ່າງງຽບໆແລະດ້ວຍໃຈອ່ອນນ້ອມ. 12ເຮົາບໍ່ອະນຸຍາດໃຫ້ຜູ້ຍິງສັ່ງສອນ
ຫລືໃຊ້ອຳນາດເໜືອຜູ້ຊາຍ ແຕ່ໃຫ້ເຂົາມິດງຽບຢູ່. 13ດ້ວຍວ່າພຣະເຈົ້າໄດ້ຊົງປັ້ນອາດາມຂຶ້ນ
ກ່ອນ ແລ້ວຈຶ່ງຊົງສ້າງເອວາ. 14ແລະອາດາມບໍ່ໄດ້ຖືກຫລອກລວງ ແຕ່ຜູ້ຍິງໄດ້ຖືກຫລອກ
ລວງຈຶ່ງຕົກໃນການລ່ວງລະເມີດ. 15ແຕ່ເຖິງປານນັ້ນກໍດີ, ຜູ້ຍິງຍັງໄດ້ຮັບການຊົງໂຜດໃຫ້ພົ້ນ
ໄດ້ດ້ວຍການເກີດລູກ ຖ້າເຂົາຕັ້ງໝັ້ນຄົງຢູ່ໃນຄວາມເຊື່ອ, ໃນຄວາມຮັກ, ແລະໃນຄວາມບໍລິ-
ສຸດພ້ອມດ້ວຍຄວາມສະຫງ່ຽມຄ່ຽມຄົມ.

# ບົດທີ 3

## ຄຸນສົມບັດຂອງຜູ້ດູແລຄຣິສຕະຈັກ

1ຄຳນີ້ເປັນຄຳຈິງ ຄືວ່າຖ້າຜູ້ໃດປາດຖະໜາໜ້າທີ່ເປັນຜູ້ດູແລຄຣິສຕະຈັກ ຜູ້ນັ້ນກໍປາດຖະ-
ໜາການງານອັນດີ. 2ຜູ້ດູແລນັ້ນຕ້ອງເປັນຄົນທີ່ບໍ່ມີໃຜຕິໄດ້, ເປັນຜົວຂອງຍິງຄົນດຽວ, ເປັນ
ຄົນຮູ້ຈັກບັງຄັບຕົນເອງ, ມີສະຕິອັນດີຮອບຄອບ, ມີກິລິຍາຮຽບຮ້ອຍ, ມີໃຈສັດທາເຫລື້ອມໃສ
ໃນການຮັບແຂກ, ເໝາະສົມທີ່ຈະເປັນຄູ. 3ບໍ່ເປັນຄົນເມົາເຫລົ້າ, ບໍ່ເປັນຄົນຫຍາບຊ້າສາໂຫດ
ແຕ່ເປັນຄົນມີໃຈສຸພາບ ບໍ່ເປັນຄົນມັກຜິດຖຽງກັນ, ບໍ່ເປັນຄົນເຫັນແກ່ເງິນ. 4ຕ້ອງເປັນຄົນ
ຄອບຄອງບ້ານເຮືອນຂອງຕົນໄດ້ດີທີ່ໃຫ້ລູກທັງຫລາຍຂອງຕົນຍອມຟັງດ້ວຍຄວາມອ່ອນນ້ອມ
ທຸກຢ່າງ. 5(ເພາະວ່າຖ້າຊາຍຜູ້ໃດບໍ່ຮູ້ຈັກຄອບຄອງບ້ານເຮືອນຂອງຕົນ ຜູ້ນັ້ນຈະດູແລຄຣິສຕະ-
ຈັກຂອງພຣະເຈົ້າໄດ້ຢ່າງໃດ.) 6ຢ່າຕັ້ງຜູ້ທີ່ເຊື່ອໃໝ່ໆ ໃຫ້ເປັນຜູ້ດູແລ ຢ້ານວ່າຈະອວດຕົວຂຶ້ນ
ດ້ວຍຄວາມຈອງຫອງ ແລ້ວກໍຈະຖືກໂທດເໝືອນຢ່າງພະຍາມານ. 7ອີກປະການໜຶ່ງ, ຜູ້ດູແລ
ນັ້ນຕ້ອງເປັນຜູ້ທີ່ຄົນພາຍນອກນັບຖື ຢ້ານວ່າຈະຖືກການຕິຕຽນນິນທາແລະຖືກບ້ວງບາດຂອງ
ມານ.

8ຝ່າຍພວກຜູ້ປົວລະບັດນັ້ນກໍເໝືອນກັນ ຄືຕ້ອງເປັນຄົນເອົາການເອົາງານ, ບໍ່ເປັນຄົນສອງ
ລີ້ນ, ບໍ່ເປັນຄົນດື່ມເຫລົ້າແວງເກີນສ່ວນ, ບໍ່ເປັນຄົນໂລບເຫັນແກ່ໄດ້. 9ແຕ່ຕ້ອງເປັນຄົນຍຶດໝັ້ນ
ໃນຂໍ້ລັບເລິກແຫ່ງຄວາມເຊື່ອດ້ວຍໃຈສຳນຶກວ່າຕົນຊອບ. 10ຈົ່ງລອງເບິ່ງຄົນເຫລົ່ານີ້ເສຍກ່ອນ
ແລະເມື່ອເຫັນວ່າບໍ່ມີຂໍ້ຕິຕຽນໄດ້ ຈຶ່ງຕັ້ງເຂົາໄວ້ໃນຕຳແໜ່ງຜູ້ປົວລະບັດ. 11ຝ່າຍພວກຜູ້ຍິງກໍ
ເໝືອນກັນ ຕ້ອງເປັນຄົນເອົາການເອົາງານ, ບໍ່ເປັນຄົນໃສ່ຮ້າຍປ້າຍສີ ແຕ່ຕ້ອງເປັນຄົນຮູ້ຈັກ
ບັງຄັບຕົນ ແລະເປັນຄົນສັດຊື່ໃນສິ່ງທັງປວງ. 12ຝ່າຍຜູ້ປົວລະບັດນັ້ນ ຕ້ອງເປັນຜົວຂອງຍິງຄົນ
ດຽວ, ເປັນຄົນຮູ້ຈັກຄອບຄອງລູກແລະບ້ານເຮືອນຂອງຕົນໄດ້ດີ. 13ເພາະວ່າຜູ້ທີ່ດຳເນີນໜ້າທີ່
ປົວລະບັດໄດ້ດີນັ້ນກໍໄດ້ຮັບກຽດ ແລະມີໃຈກ້າອາດກ່າວເຖິງຄວາມເຊື່ອທີ່ມີໃນພຣະເຢຊູຄຣິດ.

## ຂໍ້ລັບເລິກແຫ່ງພຣະສາດສະໜາຂອງເຮົາ

14ເຮົາຫວັງໃຈວ່າໃນມໍ່ໆ ນີ້ເຮົາຈະໄດ້ມາຫາເຈົ້າທັງຫລາຍ ເຮົາຈຶ່ງຂຽນຂໍ້ຄວາມນີ້ມາເຖິງ
ພວກເຈົ້າກໍເພື່ອວ່າ. 15ຖ້າເຮົາຫາກຍັງຊ້າຢູ່ ພວກເຈົ້າກໍຈະໄດ້ຮູ້ວ່າຄວນຈະປົວລະບັດຢ່າງໃດ
ໃນຄອບຄົວຂອງພຣະເຈົ້າ ຄືຄຣິສຕະຈັກຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ທີ່ເປັນເສົາແລະຮາກ
ແຫ່ງຄວາມຈິງ. 16ເຮົາຕ້ອງຍອມຮັບວ່າຂໍ້ລັບເລິກແຫ່ງສາດສະໜາຂອງເຮົານີ້ກໍໃຫຍ່ຫລາຍ ຄື

ວ່າ,

ພຣະອົງຊົງປະກົດມີສະພາບເປັນມະນຸດ
  ພຣະວິນຍານໄດ້ຊົງປະກາດວ່າຊົງເປັນຜູ້ຊອບທຳ
ຝູງເທວະດາກໍໄດ້ເຫັນ
  ມີຜູ້ປະກາດພຣະອົງແກ່ພວກຕ່າງຊາດ
ມີຊາວໂລກໄດ້ເຊື່ອຖືພຣະອົງ
  ພຣະອົງຊົງຖືກຮັບຂຶ້ນເມືອສູ່ພຣະລັດສະໝີ.

# ບົດທີ 4

## ເລື່ອງຄູສອນບໍ່ຈິງ

1ພຣະວິນຍານຊົງກ່າວໄວ້ໂດຍແຈ່ມແຈ້ງວ່າ ໃນຄາວພາຍໜ້າຈະມີລາງຄົນປະຖິ້ມຄວາມ
ເຊື່ອ ໂດຍຫັນໄປເຊື່ອຟັງພຣະວິນຍານທີ່ລໍ້ລວງ ແລະຟັງຄຳສອນຂອງພວກຜີຮ້າຍ. 2ຊຶ່ງມາ
ຈາກການໜ້າຊື່ໃຈຄົດຂອງຄົນທີ່ກ່າວຕົວະ ຄືຄົນທີ່ໃຈສຳນຶກຜິດແລະຊອບຂອງເຂົາຖືກໝາຍ
ໄວ້ເໝືອນກັບຮ້ອຍເຫລັກແດງ. 3ເຂົາຫ້າມບໍ່ໃຫ້ເອົາກັນເປັນຜົວເມຍ, ຫ້າມບໍລິໂພກອາຫານບາງ
ຊະນິດຊຶ່ງພຣະເຈົ້າໄດ້ຊົງສ້າງໄວ້ໃຫ້ຜູ້ທີ່ເຊື່ອແລະຮູ້ຈັກຄວາມຈິງນັ້ນໄດ້ຮັບບໍລິໂພກດ້ວຍຂອບ
ພຣະຄຸນ. 4ດ້ວຍວ່າສິ່ງສາລະພັດຊຶ່ງພຣະເຈົ້າໄດ້ຊົງສ້າງໄວ້ນັ້ນກໍເປັນຂອງດີ ບໍ່ມີສິ່ງໃດທີ່ຄວນ
ປະຖິ້ມຈັກສິ່ງ ແຕ່ຄວນຮັບເອົາທຸກສິ່ງດ້ວຍຂອບພຣະຄຸນ. 5ເພາະວ່າສິ່ງເຫລົ່ານັ້ນກໍຊົງຊຳລະ
ໄວ້ແລ້ວ ໂດຍພຣະທຳຂອງພຣະເຈົ້າແລະຄຳວອນຂໍ.

## ຜູ້ບົວລະບັດທີ່ດີຂອງພຣະເຢຊູຄຣິດ

6ຖ້າເຈົ້າຈະໃຫ້ຄຳແນະນຳເຫລົ່ານີ້ໃຫ້ແກ່ພວກພີ່ນ້ອງ ເຈົ້າກໍຈະເປັນຜູ້ບົວລະບັດທີ່ດີຂອງ
ພຣະເຢຊູຄຣິດ ບຳລຸງຕົນດ້ວຍຂໍ້ຄວາມເລື່ອງຄວາມເຊື່ອແລະດ້ວຍຫລັກຄຳສອນອັນດີທີ່ເຈົ້າໄດ້
ຂັບຕາມນັ້ນ. 7ຈົ່ງເວັ້ນໜີຈາກນິຍາຍປະໂລມໂລກທີ່ພວກຜູ້ຍິງເຖົ້າເຄີຍເລົ່າໃຫ້ຟັງນັ້ນ ແຕ່ຈົ່ງ
ເຝິກຕົນໃນການນັບຖືພຣະເຈົ້າຢ່າງຖືກຕ້ອງ. 8ເພາະການເຝິກຫັດທາງກາຍນັ້ນມີປະໂຫຍດ
ບາງຢ່າງ ແຕ່ການນັບຖືພຣະເຈົ້າຢ່າງຖືກຕ້ອງມີປະໂຫຍດທຸກຢ່າງ ເພາະໄດ້ຮັບພຣະສັນຍາ
ໄວ້ສຳລັບຊີວິດໃນປະຈຸບັນແລະໃນອະນາຄົດດ້ວຍ. 9ຂໍ້ຄວາມນີ້ກໍສັດຈິງແລະສົມຄວນທຸກຄົນ
ຈະໄດ້ຮັບເຊື່ອເອົາໄວ້. 10ເຫດທີ່ເຮົາເຮັດການໜັກໜ່ວງແລະອົດສາສູ້ ກໍເພາະວ່າເຮົາໄດ້ໄວ້
ວາງໃຈໃນພຣະເຈົ້າຜູ້ຊົງພຣະຊົນຢູ່, ຜູ້ຊົງໂຜດໃຫ້ພົ້ນຂອງຄົນທັງປວງ, ເປັນຕົ້ນຂອງພວກຄົນ
ທີ່ເຊື່ອໃນພຣະອົງ.

11ຈົ່ງສັ່ງສອນຂໍ້ຄວາມເຫລົ່ານີ້. 12ຢ່າໃຫ້ຜູ້ໃດໝິ່ນປະໝາດຄວາມໜຸ່ມຂອງເຈົ້າ ແຕ່ຈົ່ງເປັນ
ແບບຢ່າງແກ່ຄົນທັງປວງທີ່ເຊື່ອ ທັງໃນທາງກິລິຍາແລະວາຈາ, ໃນຄວາມຮັກ, ໃນຄວາມເຊື່ອ[ກ]
ແລະໃນຄວາມບໍລິສຸດ. 13ຈົ່ງຕັ້ງໃຈໃນການອ່ານໜັງສື,[ຂ] ໃນການເຕືອນສະຕິ, ແລະໃນການ
ສັ່ງສອນຈົນກວ່າເຮົາຈະມາ. 14ຢ່າເບີດເສີຍຕໍ່ຄຸນນະທຳທີ່ມີຢູ່ໃນຕົວເຈົ້າ ທີ່ໄດ້ຊົງປະທານແກ່

---

[ກ]ຫລືວ່າ "ໃນຄວາມສັດຊື່." [ຂ]ຄືການອ່ານພຣະທຳຄຳພີໃນທີ່ປະຊຸມ.

ເຈົ້າດ້ວຍຄຳທຳນວາຍເມື່ອຄະນະເຖົ້າແກ່ໄດ້ວາງມືໃສ່ເຈົ້າ. [15]ຈົ່ງໝັ່ນຮ່ຳເພິງຂໍ້ຄວາມເຫລົ່ານີ້
ດ້ວຍສຸດໃຈ ເພື່ອຄວາມຈະເລີນຂອງເຈົ້າຈະໄດ້ປະກົດແກ່ຄົນທັງປວງ. [16]ຈົ່ງລະວັງຕົວແລະ
ການສັ່ງສອນຂອງເຈົ້າໃຫ້ດີ ຈົ່ງຕັ້ງໝັ້ນຢູ່ໃນຂໍ້ຄວາມເຫລົ່ານີ້ ເພາະເມື່ອເຮັດຢ່າງນັ້ນເຈົ້າຈະ
ຊ່ອຍຕົວເອງ ກັບທັງຊ່ອຍຄົນທັງຫລາຍທີ່ຟັງເຈົ້ານັ້ນໃຫ້ພົ້ນ.

# ບົດທີ 5

## ໜ້າທີ່ຕ້ອງເຮັດຕໍ່ຜູ້ອື່ນ

[1]ຢ່າໃສ່ຄຳຫຍາບຊ້າໃນການຕັກເຕືອນຊາຍຜູ້ມີອາວຸໂສ ແຕ່ຈົ່ງຂໍຮ້ອງເໝືອນເພິ່ນເປັນພໍ່ ຈົ່ງ
ຖືວ່າພວກຊາຍໜຸ່ມນັ້ນເປັນເໝືອນອ້າຍນ້ອງ. [2]ແລະພວກຍິງຜູ້ມີອາວຸໂສເປັນເໝືອນແມ່ສ່ວນ
ພວກຜູ້ຍິງໜຸ່ມກໍໃຫ້ເປັນເໝືອນອ້າຍນ້ອງໂດຍມີໃຈບໍລິສຸດຕໍ່ເຂົາ.

[3]ຈົ່ງຮັບຮູ້ພວກແມ່ໝ້າຍທີ່ເປັນແມ່ໝ້າຍແທ້ຈິງ. [4]ຖ້າແມ່ໝ້າຍຄົນໃດມີລູກຫລືຫລານ ກໍໃຫ້
ລູກຫລານນັ້ນຮຽນວິທີປະຕິບັດທາງສາດສະໜາໂດຍບົວລະບັດຕໍ່ຄອບຄົວຂອງຕົນກ່ອນ ແລະ
ໃຫ້ຕອບແທນຄຸນພໍ່ແມ່ ເພາະວ່າການເຮັດຢ່າງນັ້ນເປັນທີ່ຊອບຕໍ່ພຣະພັກ ພຣະເຈົ້າ. [5]ຝ່າຍຜູ້ຍິງ
ທີ່ເປັນແມ່ໝ້າຍແທ້ແລະຖືກປະຢູ່ແຕ່ຜູ້ດຽວນັ້ນ ກໍຍອມມອບຄວາມຫວັງໄວ້ກັບ ພຣະເຈົ້າ ແລະ
ຕັ້ງໝັ້ນຄົງຢູ່ໃນການວອນຂໍແລະໃນການໄຫວ້ວອນທັງກາງເວັນແລະກາງຄືນ. [6]ສ່ວນຜູ້ຍິງທີ່
ປ່ອຍຕົວໄປຕາມຄວາມສຸກນັ້ນກໍຕາຍແລ້ວທັງເປັນ. [7]ຈົ່ງສັ່ງເນັ້ນຂໍນີ້ເພື່ອເຂົາຈະບໍ່ຖືກຕິຕຽນ.
[8]ຖ້າແມ່ນຜູ້ໃດບໍ່ບຳລຸງລ້ຽງດູຍາດພີ່ນ້ອງຂອງຕົນ ເປັນຕົ້ນວ່າຄົນໃນຄອບຄົວຂອງຕົນ ຜູ້ນັ້ນກໍ
ໄດ້ປະຕິເສດພຣະສາດສະໜາເສຍແລ້ວແລະແຮງຊົ່ວກວ່າຄົນທີ່ບໍ່ເຊື່ອເສຍອີກ.

[9]ຢ່າໄດ້ລົງຊື່ແມ່ໝ້າຍຄົນໃດໃນທະບຽນ ເວັ້ນໄວ້ແຕ່ຜູ້ທີ່ມີອາຍຸຫົກສິບປີ ແລະເປັນເມຍຂອງ
ຊາຍຄົນດຽວ. [10]ແລະຈະຕ້ອງເປັນຜູ້ທີ່ມີຊື່ວ່າໄດ້ເຮັດການດີ ຄືໄດ້ບຳລຸງລ້ຽງລູກ, ພໍໃຈຮັບ-
ແຂກ, ໄດ້ລ້າງຕີນພວກໄພ່ພົນຂອງ ພຣະເຈົ້າ, ໄດ້ສົງເຄາະຄົນທີ່ມີຄວາມທຸກລຳບາກ, ແລະ
ໝັ່ນຕິດຕາມການດີທຸກຢ່າງ. [11]ແຕ່ແມ່ໝ້າຍທີ່ຍັງໜຸ່ມກວ່ານັ້ນຢ່າຍອມຮັບ ເພາະວ່າເມື່ອເຂົາ
ຫລົງຫ່າງຈາກ ພຣະຄຣິດ ໄປ ແລ້ວເຂົາກໍຢາກເອົາຜົວໃໝ່. [12]ເຂົາຈະຕ້ອງຖືກຕຳໜິ ເພາະເຂົາ
ໄດ້ລະເມີດຄຳປະຕິຍານເດີມຂອງເຂົາ. [13]ນອກຈາກນັ້ນເຂົາກໍຈະຮຽນເປັນຄົນມັກຢູ່ລ້າ ທຽວໄປ
ເຮືອນຫລັງນັ້ນຫລັງນີ້ ບໍ່ໃຊ້ເປັນຄົນມັກຢູ່ລ້າເທົ່ານັ້ນ ແຕ່ຍັງເປັນຄົນມັກເວົ້າຄວາມບໍ່ມີແກ່ນ-
ສານ ທັງເປັນຄົນເຂົ້າຫຍຸ້ງກ່ຽວກັບທຸລະກິດຂອງຜູ້ອື່ນແລະມັກເວົ້າແຕ່ສິ່ງທີ່ບໍ່ສົມຄວນ. [14]ເຫດ
ສັນນັ້ນເຮົາຈຶ່ງປາດຖະໜາໃຫ້ພວກແມ່ໝ້າຍທີ່ຍັງໜຸ່ມນັ້ນເອົາຜົວ, ມີລູກ, ແລະດູແລບ້ານເຮືອນ
ເພື່ອບໍ່ໃຫ້ສັດຕູມີຊ່ອງທາງນິນທາໄດ້. [15]ເພາະວ່າມີລາງຄົນໄດ້ຫລົງຕາມ ຊາຕານ ໄປແລ້ວ.
[16]ຖ້າຍິງຜູ້ມີຄວາມເຊື່ອຄົນໃດມີພີ່ນ້ອງເປັນແມ່ໝ້າຍ ກໍໃຫ້ເພິ່ນຊ່ອຍລ້ຽງດູ ຢ່າໃຫ້ເປັນພາລະ
ຂອງຄຣິສຕະຈັກເພື່ອຄຣິສຕະຈັກຈະໄດ້ສົງເຄາະພວກທີ່ເປັນແມ່ໝ້າຍອັນແທ້ຈິງ.

[17]ຈົ່ງຖືວ່າພວກເຖົ້າແກ່ທີ່ປົກຄອງດີນັ້ນ ສົມຄວນໄດ້ຮັບກຽດສອງທໍ່[ກ] ເປັນຕົ້ນວ່າພວກເຖົ້າ
ແກ່ທີ່ເທດສະໜາແລະສັ່ງສອນດ້ວຍການໜັກໜ່ວງ. [18]ເພາະພຣະຄຳພີກ່າວວ່າ, "ຢ່າເອົາສອບ

[ກ]ຫລືວ່າ "ຈະໄດ້ການບຳລຸງລ້ຽງສອງທໍ່."

ໃສ່ສົບງົວທີ່ກຳລັງຢຽບເຂົ້າ” ແລະ “ຄົນງານກໍຄວນຈະໄດ້ຮັບຄ່າຈ້າງຂອງຕົນ.” [19]ຢ່າຍອມຮັບ
ຄຳກ່າວຫາໃສ່ເຖົ້າແກ່ຄົນໃດເວັ້ນເສຍແຕ່ມີພະຍານສອງຫລືສາມປາກ. [20]ສຳລັບຜູ້ທີ່ຍັງເຮັດຜິດ
ນັ້ນ ຈົ່ງຕິຕຽນເຂົາຊ້ອງໜ້າຄົນທັງປວງ ເພື່ອຜູ້ອື່ນຈະມີຄວາມຢ້ານເໝືອນກັນ. [21]ເຮົາສັ່ງເຈົ້າຕໍ່
ພຣະພັກ **ພຣະເຈົ້າ**, ແລະ **ພຣະເຢຊູຄຣິດ**, ແລະຝູງເທວະດາທີ່ຊົງເລືອກໄວ້ແລ້ວນັ້ນ ໃຫ້ເຈົ້າ
ຮັກສາລະບຽບເຫລົ່ານີ້ໄວ້ໂດຍບໍ່ເຫັນແກ່ໜ້າຜູ້ໃດ ແລະບໍ່ເຮັດການໃດໆ ດ້ວຍໃຈລຳອຽງ.
[22]ຢ່າຟ້າວວາງມື[ກ] ລົງໃສ່ຜູ້ໃດ ຢ່າເຂົ້າມີສ່ວນຮ່ວມການຜິດບາບກັບຄົນອື່ນ ຈົ່ງຮັກສາຕົວໄວ້
ໃຫ້ບໍລິສຸດ. [23]ຕໍ່ໄປຢ່າດື່ມແຕ່ນ້ຳສິ່ງດຽວ ແຕ່ຄວນໃຊ້ເຫລົ້າແວງແດ່ເລັກນ້ອຍ ເພາະເຫັນແກ່
ກະເພາະອາຫານແລະຄວາມອ່ອນແຮງທີ່ເຈົ້າມີຢູ່ເລື້ອຍນັ້ນ. [24]ການຜິດບາບຂອງລາງຄົນກໍປະ-
ກົດຢ່າງເປີດເຜີຍ ນຳເຂົາໄປສູ່ການພິພາກສາແຕ່ການຜິດບາບຂອງລາງຄົນກໍປະກົດຕາມພາຍ-
ຫລັງ. [25]ສ່ວນການດີກໍປະກົດເປີດເຜີຍຢ່າງດຽວກັນ ແລະເຖິງແມ່ນວ່າບໍ່ປະກົດຄັກກໍປົກບັງໄວ້
ບໍ່ໄດ້.

# ບົດທີ 6

[1]ສ່ວນຄົນທັງຫລາຍທີ່ເຂົ້າຢູ່ໃຕ້ແອກແຫ່ງຄວາມເປັນຂ້ອຍຂ້ານັ້ນ ໃຫ້ຖືວ່ານາຍຂອງຕົນເປັນ
ຜູ້ສົມຄວນຮັບກຽດທຸກຢ່າງ ເພື່ອວ່າ ພຣະນາມຂອງ **ພຣະເຈົ້າ** ແລະຄຳໂອວາດຈະບໍ່ຖືກປະ-
ໝາດ. [2]ຝ່າຍພວກຂ້ອຍຂ້າທີ່ມີນາຍເປັນຜູ້ເຊື່ອແລ້ວກໍຢ່າຄຶດປະໝາດນາຍນັ້ນ ເພາະເຫດວ່າ
ເປັນພີ່ນ້ອງກັນ ແຕ່ວ່າຫລາຍກວ່ານັ້ນເຂົາຕ້ອງຮັບໃຊ້ນາຍໃຫ້ດີຂຶ້ນ ເພາະເຫດວ່ານາຍຜູ້ຮັບ
ປະໂຫຍດຈາກການງານຂອງຕົນນັ້ນ ກໍເປັນຜູ້ມີຄວາມເຊື່ອແລະເປັນທີ່ຮັກ.

## ອັນຕະລາຍຂອງຄຳສອນປອມແລະການຮັກແພງເງິນ

[3]ຈົ່ງສັ່ງສອນ ແລະ ເຕືອນສະຕິຂໍ້ຄວາມເຫລົ່ານີ້ ຖ້າຜູ້ໃດສອນຜິດໄປຈາກຄວາມນີ້ ແລະບໍ່
ຍອມເຫັນຕາມພຣະທຳອັນມີຫລັກຂອງ **ພຣະເຢຊູ** ຄຣິດເຈົ້າຂອງເຮົາທັງຫລາຍ ແລະຄຳໂອວາດທີ່
ສົມກັບການນັບຖື **ພຣະເຈົ້າ** ຢ່າງຖືກຕ້ອງ. [4]ຜູ້ນັ້ນກໍເປັນຄົນຈອງຫອງ ບໍ່ຮູ້ຈັກສິ່ງໃດ ແຕ່ມົວເມົາ
ໃນການຖົກຖຽງກັນແລະທະເລາະວິວາດກັນເຖິງເລື່ອງຄຳ ຊຶ່ງເປັນເຫດໃຫ້ເກີດການເຫິງສາກັນ,
ການຜິດຖຽງກັນ, ການໝິ່ນປະໝາດກັນ, ການບໍ່ໄວ້ວາງໃຈກັນຄຶດຮ້າຍຕໍ່ກັນ. [5]ແລະການກະ-
ທົບກະເທືອນບໍ່ຂາດລະຫວ່າງຄົນໃຈທຸຈະລິດແລະຂາດຄວາມຈິງ ທີ່ຄຶດວ່າການນັບຖື **ພຣະເຈົ້າ**
ຢ່າງຖືກຕ້ອງນັ້ນເປັນທາງທີ່ຈະໄດ້ກຳໄລ. [6]ຈິງຢູ່, ການນັບຖື **ພຣະເຈົ້າ** ຢ່າງຖືກຕ້ອງນັ້ນໄດ້ກຳ-
ໄລອັນມະຫາສານແກ່ຜູ້ທີ່ມີຄວາມພໍໃຈກັບສິ່ງຂອງທີ່ຕົນມີຢູ່. [7]ເພາະວ່າພວກເຮົາບໍ່ໄດ້ເອົາສິ່ງໃດ
ເຂົ້າມາໃນໂລກສັນໃດ ເຮົາກໍຈະເອົາສິ່ງໃດອອກໄປຈາກໂລກບໍ່ໄດ້ສັນນັ້ນ. [8]ແຕ່ຖ້າພວກເຮົາມີ
ອາຫານການກິນກັບເຄື່ອງນຸ່ງຫົ່ມກໍໃຫ້ເຮົາພໍໃຈກັບສິ່ງເຫລົ່ານັ້ນ. [9]ສ່ວນຄົນເຫລົ່ານັ້ນທີ່ຢາກລຳ
ລວຍກໍຕົກຢູ່ໃນການທົດລອງ, ໃນບ້ວງແຮ້ວ, ແລະໃນຕັນຫາອັນໂງ່ຫລາຍຢ່າງ ຊຶ່ງເປັນໄພແກ່
ຕົວທີ່ເຮັດໃຫ້ມະນຸດຈົມລົງໃນຄວາມວິນາດຈິບຫາຍເສື່ອມສູນໄປ. [10]ເພາະວ່າການຮັກເງິນຄຳ
ເປັນເຄົ້າມູນແຫ່ງຄວາມຊົ່ວທຸກຢ່າງ ແລະເພາະເຫດຄວາມໂລບນີ້ແຫລະ, ຈົ່ງຊັກຈູງຜູ້ລາງຄົນ

[ກ]ຄວາມວ່າ “ວາງມື” ນັ້ນອາດໝາຍເຖິງພິທີສະຖາປະນາ.

ໃຫ້ຫລົງໄປຈາກຄວາມເຊື່ອ ແລະແທງຕົວເອງຈົນຊອດດ້ວຍຄວາມເຈັບແສບຫລາຍປະການ.

## ການຕໍ່ສູ້ຢ່າງເຕັມກຳລັງກ່ຽວກັບຄວາມເຊື່ອ

[11]ແຕ່ ພຣະເຈົ້າ ຜູ້ເປັນຄົນຂອງ ພຣະເຈົ້າ, ຈົ່ງຫລີກໜີຈາກສິ່ງເຫລົ່ານີ້ ແລະຈົ່ງຕິດຕາມ
ຄວາມຊອບທຳ, ຄວາມນັບຖືພຣະເຈົ້າຢ່າງຖືກຕ້ອງ, ຄວາມຊື່ສັດ,[ກ] ຄວາມຮັກ, ຄວາມໝັ່ນ
ພຽນ, ແລະຄວາມອ່ອນສຸພາບ. [12]ຈົ່ງອົດສາແຂ່ງຂັນສູ້ຕາມແນວທາງຂອງຄວາມເຊື່ອ ຈົ່ງຍຶດ
ເອົາຊີວິດອັນຕະຫລອດໄປເປັນນິດໄວ້ ຊຶ່ງ ພຣະເຈົ້າ ໄດ້ຊົງເອີ້ນໃຫ້ເຈົ້າຮັບນັ້ນ ໃນເມື່ອເຈົ້າໄດ້
ຮັບເຊື່ອແລະປະຕິຍານຕົນຢ່າງດີຕໍ່ໜ້າພະຍານຫລາຍຄົນ. [13]ເຮົາສັ່ງເຈົ້າຕໍ່ພຣະພັກພຣະເຈົ້າຜູ້
ຊົງບັນດານໃຫ້ສິ່ງທັງປວງມີຊີວິດ ແລະຕໍ່ພຣະພັກພຣະເຢຊູຄຣິດ ຜູ້ໄດ້ຊົງເປັນພະຍານເຖິງຄຳ
ປະຕິຍານອັນດີຕໍ່ໜ້າປົນຕີໂອປີລາດ. [14]ໃຫ້ເຈົ້າຮັກສາຄຳສັ່ງນີ້ໄວ້, ຢ່າໃຫ້ດ່າງພ້ອຍ, ຢ່າໃຫ້ມີ
ທີ່ຕິໄດ້ຈົນເຖິງເວລາທີ່ ພຣະເຢຊູຄຣິດ ເຈົ້າຂອງເຮົາທັງຫລາຍຈະສະເດັດສ່ອງສະຫວ່າງມາປະ-
ກົດ. [15]ຊຶ່ງ ພຣະເຈົ້າ ຜູ້ສະເຫວີຍສຸກແລະຊົງລິດສູງສຸດແຕ່ພຣະອົງດຽວ ຊົງເປັນພຣະມະຫາກະ-
ສັດເໜືອກະສັດທັງປວງ ແລະຊົງເປັນເຈົ້າເໜືອເຈົ້າທັງປວງ ຈະຊົງສະແດງໃຫ້ປະກົດຕາມເວ-
ລາກຳນົດ. [16]ພຣະອົງຜູ້ດຽວຊົງເປັນອຳມະຕະແລະຊົງສະຖິດຢູ່ໃນຄວາມສະຫວ່າງ ຊຶ່ງບໍ່ມີຄົນ
ໃດຈະເຂົ້າໄປເຖິງ ເປັນອົງທີ່ມະນຸດບໍ່ໄດ້ເຫັນຈັກເທື່ອ ແລະບໍ່ສາມາດຈະເຫັນໄດ້ ພຣະກຽດ
ແລະລິດທານຸພາບອັນຖາວອນຈົ່ງມີແກ່ພຣະອົງນັ້ນ ອາແມນ.

## ຄຳເຕືອນສະຕິຕອນສຸດທ້າຍ

[17]ເຈົ້າຈົ່ງສັ່ງຄົນທີ່ຮັ່ງມີຝ່າຍໂລກ ຢ່າໃຫ້ເຂົາເປັນຄົນມີໃຈອວດອົ່ງຖືໂຕ ຫລືວາງໃຈໃນຊັບ
ສົນອັນບໍ່ໝັ້ນທ່ຽງ ແຕ່ໃຫ້ໄວ້ໃຈໃນ ພຣະເຈົ້າ ຜູ້ຊົງປະທານສິ່ງສາລະພັດໃຫ້ແກ່ເຮົາທັງຫລາຍ
ຢ່າງບໍລິບູນ ເພື່ອຈະໃຫ້ພວກເຮົາໃຊ້ດ້ວຍຄວາມປິຕິຍິນດີ. [18]ຈົ່ງສັ່ງເຂົາໃຫ້ເຮັດແຕ່ຄຸນງາມ-
ຄວາມດີ ໃຫ້ເຂົາຮັ່ງມີໃນການປະຕິບັດອັນດີງາມ ໃຫ້ເຂົາມີໃຈສັດທາເອື້ອເຟື້ອເຜື່ອແຜ່ ແລະບໍ່
ເຫັນແກ່ຕົວ. [19]ຢ່າງນີ້ຈົ່ງຈະໄດ້ທ້ອນໂຮມຊັບສົມບັດໄວ້ສຳລັບຕົນ ເພື່ອເປັນຮາກຖານອັນດີສຳ-
ລັບຄາວພາຍໜ້າ ເພື່ອເຂົາຈະໄດ້ຍຶດເອົາຊີວິດອັນທ່ຽງແທ້.
[20]ຕີໂມທຽວ ເອີຍ, ສິ່ງທີ່ເຮົາຝາກໄວ້ກັບເຈົ້າແລ້ວນັ້ນຈົ່ງຮັກສາໄວ້ ຈົ່ງເວັ້ນເສຍຈາກການເວົ້າ
ອັນບໍ່ເປັນປະໂຫຍດ ແລະຂັດຕໍ່ສາດສະໜາ ແລະຈາກຂໍ້ໂຕ້ຖຽງຂອງສິ່ງທີ່ເຂົາເອີ້ນຜິດວ່າເປັນ
ວິຊາຄວາມຮູ້. [21]ຊຶ່ງລາງຄົນໄດ້ຍອມວ່າຮັບເອົາແລ້ວ ຈົ່ງໄດ້ລົງໄປຈາກຄວາມເຊື່ອ. ຂໍພຣະຄຸນ
ຈົ່ງສະຖິດນຳເຈົ້າທັງຫລາຍເທີນ.

* * *

[ກ]ຫລືວ່າ "ຄວາມເຊື່ອ."

# ຈົດໝາຍຂອງໂປໂລ ທີ່ມີໄປເຖິງ
# ຕີໂມທຽວ ສະບັບທີສອງ

## ບົດທີ 1

1ໂປໂລ ອັກຄະສາວົກຂອງ ພຣະເຢຊູຄຣິດ ດ້ວຍທາງນ້ຳພຣະໄທຂອງ ພຣະເຈົ້າ ຕາມພຣະ-
ສັນຍາທີ່ຈະຊົງປະທານຊີວິດຊຶ່ງມີຢູ່ໃນ ພຣະເຢຊູຄຣິດ. 2ເຖິງ ຕີໂມທຽວ ທີ່ຮັກຂອງເຮົາ. ຂໍ
ພຣະຄຸນ, ພຣະເມດຕາ ແລະສັນຕິສຸກ ຊຶ່ງມາຈາກ ພຣະບິດາ ເຈົ້າຂອງ ພຣະເຢຊູຄຣິດ ອົງ
ພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ຈົ່ງມີຢູ່ກັບເຈົ້າເທີນ.

### ການຂອບພຣະຄຸນແລະໜູນນ້ຳໃຈ

3ເມື່ອເຮົາລະນຶກເຖິງເຈົ້າຢູ່ສະເໝີໃນການອ້ອນວອນທູນຂໍ ທັງກາງເວັນ ແລະກາງຄືນນັ້ນ
ເຮົາໄດ້ຂອບພຣະຄຸນ ພຣະເຈົ້າ ຜູ້ຊຶ່ງເຮົາໄດ້ບົວລະບັດຢູ່ດ້ວຍໃຈສຳນຶກຜິດແລະຊອບອັນບໍລິ-
ສຸດ ເໝືອນຢ່າງປູ່ຍ່າຕາຍາຍຂອງເຮົາ. 4ຂະນະເມື່ອລະນຶກເຖິງນ້ຳຕາຂອງເຈົ້າ ເຮົາກໍປາດຖະ-
ໜາທີ່ຈະໄດ້ພົບເຈົ້າເພື່ອເຮົາຈະໄດ້ມີຄວາມຍິນດີຢ່າງເຕັມໃຈ. 5ເຮົາລະນຶກເຖິງຄວາມເຊື່ອອັນ
ຈິງໃຈຂອງເຈົ້າ ອັນເປັນຄວາມເຊື່ອຊຶ່ງເມື່ອກ່ອນໄດ້ມີຢູ່ໃນນາງ ໂລອີ ແມ່ເຖົ້າຂອງເຈົ້າ, ແລະໃນ
ນາງຢູນິເກ ແມ່ຂອງເຈົ້າ ບັດນີ້ເຮົາເຊື່ອແນ່ວ່າມີຢູ່ໃນເຈົ້າເໝືອນກັນ.
6ເຫດສັນນັ້ນເຮົາຂໍເຕືອນສະຕິເຈົ້າໃຫ້ເປົ່າຄຸນທຳຂອງ ພຣະເຈົ້າ ທີ່ມີຢູ່ໃນເຈົ້າດ້ວຍການວາງ
ມືຂອງເຮົານັ້ນ ໃຫ້ລຸກຮຸ່ງເຮືອງຂຶ້ນໃໝ່. 7ເພາະວ່າພຣະເຈົ້າບໍ່ໄດ້ຊົງປະທານໃຈອັນຢ້ານກົວໃຫ້
ແກ່ເຮົາ ແຕ່ໃຫ້ຊົງປະທານໃຈອັນປະກອບດ້ວຍລິດອຳນາດ, ຄວາມຮັກ, ແລະການບັງຄັບຕົນ
ໃຫ້ແກ່ເຮົາ. 8ເຫດສັນນັ້ນ ຢ່າລະອາຍທີ່ຈະເປັນພະຍານຝ່າຍອົງພຣະຜູ້ເປັນເຈົ້າຂອງເຮົາທັງ-
ຫລາຍ ຫລືຝ່າຍຕົວເຮົາທີ່ຖືກຈຳຈອງຢູ່ເພາະເຫັນແກ່ພຣະອົງ ແຕ່ຈົ່ງມີສ່ວນໃນການລຳບາກ
ເພື່ອເຫັນແກ່ຂ່າວປະເສີດ ໂດຍອາໃສລິດອຳນາດແຫ່ງພຣະເຈົ້າ. 9ຜູ້ຊົງໂຜດທັງຫລາຍໃຫ້ພົ້ນ
ແລະຊົງເອີ້ນເອົາເຮົາທັງຫລາຍໃຫ້ເປັນໄພ່ພົນຂອງພຣະອົງ ບໍ່ໃຊ້ເພາະເຫັນແກ່ການດີທີ່ເຮົາໄດ້
ເຮັດນັ້ນ ແຕ່ເພາະເຫັນແກ່ພຣະປະສົງຂອງພຣະອົງເອງ ແລະພຣະຄຸນຊຶ່ງຊົງປະທານແກ່ພວກ
ເຮົາໃນ ພຣະເຢຊູຄຣິດ ຕັ້ງແຕ່ດຶກດຳບັນມານັ້ນ. 10ແລະບັດນີ້ໄດ້ຊົງສະແດງໃຫ້ແຈ່ມແຈ້ງ
ໂດຍການທີ່ ພຣະເຢຊູຄຣິດ ພຣະຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ ສະເດັດສ່ອງສະຫວ່າງ
ມາປະກົດ ຜູ້ໄດ້ຊົງກຳຈັດຄວາມຕາຍໃຫ້ສູນສິ້ນໄປ ແລະໄດ້ຊົງນຳຊີວິດແລະສະພາບອຳມະຕະ
ໃຫ້ປະກົດແຈ້ງໂດຍຂ່າວປະເສີດ. 11ສຳລັບຂ່າວປະເສີດນັ້ນເຮົາໄດ້ຮັບຊົງແຕ່ງຕັ້ງໃຫ້ເປັນຜູ້ປະ-
ກາດ, ເປັນອັກຄະສາວົກ, ແລະເປັນຄູສອນ. 12ເພາະເຫດນີ້ແຫລະ, ເຮົາຈຶ່ງອົດທົນເອົາສິ່ງທັງ-
ຫລາຍນີ້ ເຖິງປານນັ້ນເຮົາກໍບໍ່ມີຄວາມລະອາຍ ເພາະວ່າເຮົາຮູ້ຈັກພຣະອົງຜູ້ທີ່ເຮົາໄດ້ເຊື່ອແລະ
ໄວ້ວາງໃຈນັ້ນ ແລະເຮົາເຊື່ອໝັ້ນວ່າພຣະອົງຊົງສາມາດຮັກສາ ຊຶ່ງເຮົາໄດ້ມອບໄວ້ກັບພຣະ-

ອົງ[ກ] ຈົນເຖິງວັນນັ້ນ. 13ຈົ່ງເຮັດຕາມແບບຢ່າງແຫ່ງຄຳສອນອັນມີຫລັກ ທີ່ເຈົ້າໄດ້ຍິນຈາກເຮົາ
ດ້ວຍຄວາມເຊື່ອແລະຄວາມຮັກທີ່ມີຢູ່ໃນ ພຣະເຢຊູຄຣິດ. 14ຈົ່ງຮັກສາສິ່ງອັນດີທີ່ໄດ້ຊົງມອບໄວ້
ກັບເຈົ້າໂດຍ ພຣະວິນຍານບໍລິສຸດ ຊຶ່ງຊົງສະຖິດພາຍໃນເຮົາທັງຫລາຍ.

15ເຈົ້າກໍຮູ້ແລ້ວວ່າ ຄົນທັງປວງທີ່ຢູ່ແຂວງ ອາເຊຍ ນັ້ນກໍຫລົບໜ້າໜີຈາກເຮົາໝົດໃນພວກນັ້ນ
ມີ ຟຸເຄໂລ ແລະ ເຮຣະໂມເກນ ຮ່ວມດ້ວຍ. 16ຂໍໃຫ້ອົງ ພຣະຜູ້ເປັນເຈົ້າ ຊົງ ໂຜດເມດຕາແກ່ຄອບ-
ຄົວ ໂອເນຊິໂຟໂຣ ເພາະຫລາຍເທື່ອ ເພິ່ນໄດ້ເຮັດໃຫ້ເຮົາຊື່ນໃຈແລະເພິ່ນບໍ່ມີຄວາມລະອາຍຕໍ່ໂສ້
ຂອງເຮົາ. 17ແຕ່ເມື່ອເພິ່ນໄດ້ມາເຖິງ ກຸງໂຣມ ເພິ່ນໄດ້ເອົາໃຈໃສ່ຊອກຫາເຮົາຈົນພົບ. 18(ຂໍອົງ
ພຣະຜູ້ເປັນເຈົ້າ ຊົງ ໂຜດໃຫ້ເພິ່ນໄດ້ຮັບພຣະເມດຕາຈາກພຣະອົງໃນວັນນັ້ນ) ແລະເພິ່ນໄດບົວ-
ລະບັດເຮົາທີ່ເມືອງ ເອເຟໂຊ ຫລາຍປານໃດ ເຈົ້າກໍຮູ້ດີຢູ່ແລ້ວ.

# ບົດທີ 2

## ທະຫານທີ່ດີຂອງພຣະເຢຊູຄຣິດ

1ເຫດສັນນັ້ນ ລູກຂອງເຮົາເອີຍ, ຈົ່ງເຂັ້ມແຂງຂຶ້ນດ້ວຍພຣະຄຸນຊຶ່ງມີຢູ່ໃນ ພຣະຄຣິດ ຄື
ພຣະເຢຊູ. 2ຈົ່ງມອບຄຳສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ໜ້າພະຍານຫລາຍຄົນ ໄວ້ກັບຄົນຊື່ສັດທີ່
ສາມາດສອນຄົນອື່ນໄດ້ດ້ວຍ. 3ຈົ່ງມີສ່ວນຮ່ວມທຸກດ້ວຍກັນເໝືອນເປັນທະຫານທີ່ດີຂອງ ພຣະ-
ເຢຊູຄຣິດ. 4ບໍ່ມີທະຫານຄົນໃດເມື່ອເຂົ້າປະຈຳການ ແລ້ວຈະຫຍຸ້ງກ່ຽວຢູ່ກັບການງານຝ່າຍພົນ
ລະເຮືອນ ດ້ວຍວ່າເຂົາຕ້ອງເຮັດໃຫ້ຜູ້ທີ່ເກນຕົນໄດ້ຮັບຄວາມພໍໃຈ. 5ນັກກິລາຈະບໍ່ໄດ້ສວມພວງ
ມະໄລ ຖ້າເຂົາບໍ່ແຂ່ງຂັນຕາມກົດລະບຽບ. 6ຊາວນາຜູ້ເຮັດການໜັກໜ່ວງກໍຄວນເປັນຜູ້ຕົ້ນທີ່ໄດ້
ຮັບຜົນ. 7ຈົ່ງຄຶດຕຶກຕອງຂໍ້ຄວາມທີ່ເຮົາເວົ້ານັ້ນໃຫ້ທີ່ຖ້ວນ ເພາະອົງ ພຣະຜູ້ເປັນເຈົ້າ ຈະຊົງປະ-
ທານໃຫ້ເຈົ້າເຂົ້າໃຈໃນທຸກສິ່ງ.

8ຈົ່ງລະນຶກເຖິງ ພຣະເຢຊູຄຣິດ ຜູ້ໄດ້ຖືກຊົງບັນດານໃຫ້ຄືນພຣະຊົນ ແລະຊົງສືບເຊື້ອສາຍ
ຈາກ ດາວິດ ຕາມຂ່າວປະເສີດທີ່ເຮົາໄດ້ປະກາດນັ້ນ. 9ເພາະເຫດຂ່າວປະເສີດນັ້ນ ເຮົາຈຶ່ງທົນ
ທຸກແລະຖືກຜູກມັດຢູ່ເໝືອນດັ່ງຜູ້ຮ້າຍ ແຕ່ພຣະທຳຂອງ ພຣະເຈົ້າ ນັ້ນບໍ່ມີຜູ້ໃດຜູກມັດໄວ້ໄດ້.
10ດ້ວຍເຫດນັ້ນເຮົາຈຶ່ງຍອມທົນເອົາທຸກຢ່າງເພາະເຫັນແກ່ພວກທີ່ຊົງຖືກເລືອກໄວ້ນັ້ນ ເພື່ອເຂົາ
ຈະໄດ້ຮັບຄວາມພົ້ນ ຊຶ່ງມີຢູ່ໃນ ພຣະເຢຊູຄຣິດ ພ້ອມທັງສະຫງ່າລາສີອັນຕະຫລອດໄປເປັນນິດ.
11ຂໍ້ນີ້ເປັນຄຳສັດຈິງ ຄື,

"ຖ້າພວກເຮົາໄດ້ຕາຍດ້ວຍກັນກັບພຣະອົງ
ເຮົາກໍຈະມີຊີວິດດ້ວຍກັນກັບພຣະອົງເໝືອນກັນ.
12 ຖ້າພວກເຮົາພຽນອົດທົນເອົາ
ເຮົາກໍຈະໄດ້ສະເຫວີຍລາດຮ່ວມກັບພຣະອົງເໝືອນກັນ
ຖ້າພວກເຮົາປະຕິເສດພຣະອົງ
ພຣະອົງກໍຈະປະຕິເສດເຮົາເໝືອນກັນ.

[ກ]ຫລືວ່າ "ຊຶ່ງພຣະອົງໄດ້ມອບໃຫ້ແກ່ເຮົາ."

13 ຖ້າພວກເຮົາບໍ່ສັດຊື່ພຣະອົງກໍຍັງຊົງສັດຊື່ໝັ້ນຄົງຢູ່
ເພາະວ່າພຣະອົງຈະບໍ່ຊົງສາມາດປະຕິເສດພຣະອົງເອງໄດ້."

### ຄົນງານທີ່ພຣະເຈົ້າຊົງພໍພຣະໄທ

14ຈົ່ງຕັກເຕືອນເຂົາທັງຫລາຍເຖິງຂໍ້ຄວາມເຫລົ່ານີ້ ແລະຈົ່ງສັ່ງເຂົາຕໍ່ພຣະພັກພຣະເຈົ້າ ບໍ່
ໃຫ້ເຂົາຜິດຖຽງກັນດ້ວຍຂໍ້ຄວາມຕ່າງໆ ຊຶ່ງຫາປະໂຫຍດບໍ່ໄດ້ ແຕ່ກັບເປັນເຫດໃຫ້ຄົນທີ່ຟັງ
ຫລົງຈິບຫາຍໄປ. 15ຈົ່ງອົດສາພະຍາຍາມສະແດງຕົນເໝືອນເປັນຄົນທີ່ພິສູດແລ້ວຕໍ່ພຣະພັກ
ພຣະເຈົ້າ, ເປັນຄົນງານທີ່ບໍ່ຕ້ອງອາຍແລະໃຊ້ພຣະທຳແຫ່ງຄວາມຈິງຢ່າງຖືກຕ້ອງ. 16ຈົ່ງຫລີກ
ເສຍຈາກຖ້ອຍຄຳອັນບໍ່ເປັນປະໂຫຍດແລະນອກສາດສະໜາ ເພາະຄຳຢ່າງນັ້ນຈະນຳຄົນໄປສູ່
ຄວາມອະທຳທະວີຫລາຍຂຶ້ນ. 17ແລະຖ້ອຍຄຳຂອງເຂົາ ຈະເໝືອນດັ່ງບາດແຜອັນເປື່ອຍເນົ່າທີ່
ກິນລາມໄປ ໃນຈຳພວກນັ້ນມີຮີເມນາໂອກັບຟີເລໂຕເປັນຕົ້ນ. 18ຄົນທັງສອງນັ້ນໄດ້ຫລົງໄປ
ຈາກຄວາມຈິງ ໂດຍກ່າວວ່າການຄືນຈາກຄວາມຕາຍນັ້ນໄດ້ຜ່ານພົ້ນໄປແລ້ວ ເຂົາກຳລັງເຮັດ
ໃຫ້ຄວາມເຊື່ອຂອງຜູ້ລາງຄົນລົ້ມລະລາຍໄປ. 19ແຕ່ຮາກຖານອັນແໜ້ນຊຶ່ງພຣະເຈົ້າຊົງວາງໄວ້
ນັ້ນ ກໍຕັ້ງໝັ້ນຄົງຢູ່ ໂດຍມີກາປະທັບໄວ້ວ່າ "ອົງພຣະຜູ້ເປັນເຈົ້າຊົງຮູ້ຈັກຄົນເຫລົ່ານັ້ນທີ່ເປັນ
ຂອງພຣະອົງ" ແລະ "ໃຫ້ທຸກຄົນຊຶ່ງອອກຈາກພຣະນາມຂອງອົງພຣະຜູ້ເປັນເຈົ້າ ປິ່ນໜ້າເສຍ
ຈາກຄວາມຊົ່ວ."

20ໃນເຮືອນໃຫຍ່ຫລັງໃດບໍ່ແມ່ນມີແຕ່ພາຊະນະເງິນແລະຄຳເທົ່ານັ້ນ ແຕ່ມີພາຊະນະໄມ້ແລະ
ດິນດ້ວຍ ລາງຢ່າງກໍໃຊ້ເພື່ອເປັນກຽດ ແລະລາງຢ່າງກໍໃຊ້ການທຳມະດາ. 21ເຫດສັນນັ້ນຖ້າຜູ້
ໃດຊຳລະຕົວໃຫ້ພົ້ນຈາກສິ່ງຊົ່ວເຫລົ່ານັ້ນກໍເປັນເໝືອນພາຊະນະອັນມີກຽດ ຕັ້ງໄວ້ຕ່າງຫາກ,
ຊຶ່ງເປັນປະໂຫຍດແກ່ເຈົ້າຂອງເຮືອນ ທີ່ຈັດໄວ້ພ້ອມແລ້ວສຳລັບການດີທຸກຢ່າງ. 22ດັ່ງນັ້ນເຈົ້າ
ຈົ່ງຫລີກໜີຈາກລາຄະຕັນຫາຂອງຄົນໜຸ່ມຈົ່ງຕິດຕາມຄວາມຊອບທຳ, ຄວາມເຊື່ອ, ຄວາມຮັກ,
ແລະສັນຕິສຸກ ຮ່ວມກັບຄົນທັງປວງທີ່ອອກພຣະນາມອົງພຣະຜູ້ເປັນເຈົ້າດ້ວຍໃຈບໍລິສຸດ.
23ການຖົກຖຽງກັນແບບໂງ່ໆ ທີ່ບໍ່ເປັນແກ່ນສານນັ້ນ ຈົ່ງຫລີກເສຍ ດ້ວຍຮູ້ແລ້ວວ່າ ການ
ເຫລົ່ານັ້ນພາໃຫ້ເກີດການວິວາດຜິດຖຽງກັນ. 24ຝ່າຍຜູ້ຮັບໃຊ້[ກ] ຂອງອົງພຣະຜູ້ເປັນເຈົ້າບໍ່ຕ້ອງ
ວິວາດຜິດຖຽງກັນແຕ່ຕ້ອງມີໃຈເມດຕາຕໍ່ຄົນທັງປວງ, ເປັນຄູທີ່ເໝາະສົມແລະມີໃຈພາກພຽນ
ອົດທົນ. 25ຊີ້ແຈງໃຫ້ຄົນທີ່ຂັດຂວາງຕໍ່ສູ້ນັ້ນດ້ວຍໃຈອ່ອນສຸພາບວ່າພຣະເຈົ້າອາດຊົງໂຜດໃຫ້
ເຂົາຖິ້ມໃຈເກົ່າເອົາໃຈໃໝ່ ແລະມາເຖິງການສັງເກດຮູ້ ຄວາມຈິງ, 26ແລະໃຫ້ເຂົາຮູ້ສຶກຕື່ນຕົວ
ຈຶ່ງຫລຸດພົ້ນຈາກບ່ວງແຮ້ວຂອງມານ ຜູ້ຊຶ່ງຈັບເຂົາໄວ້ໃຫ້ຕາມຄວາມປະສົງຂອງມັນ.

## ບົດທີ 3

### ລັກສະນະຈິດໃຈຂອງມະນຸດໃນຄາວສຸດທ້າຍ

1ແຕ່ຈົ່ງຮູ້ຈັກຂໍ້ຄວາມນີ້ວ່າ ໃນຄາວທີ່ສຸດນັ້ນຈະເກີດຄວາມລຳບາກຢ່າງຮ້າຍແຮງ. 2ເພາະວ່າ
ຄົນທັງຫລາຍຈະເຫັນແກ່ຕົວ, ເຫັນແກ່ເງິນຄຳ, ອວດຕົວ, ຈອງຫອງ, ຊອບດ່າວ່າ, ບໍ່ເຊື່ອຟັງ

[ກ]ພາສາເດີມວ່າ "ຂ້ອຍໃຊ້."

ຄວາມພໍ່ແມ່, ເນລະຄຸນ, ເປັນຄົນບໍ່ມີສິນທຳ. 3ເປັນຄົນຂາດມະນຸດສະທຳ, ບໍ່ຍອມຜ່ອນຜັນຜູ້
ໃດ, ໃສ່ຮ້າຍປ້າຍສີກັນ, ບໍ່ຮູ້ຈັກບັງຄັບຕົນ, ມີໃຈໂຫດຮ້າຍ, ເປັນຄົນບໍ່ຮັກການດີ, 4ເປັນຄົນທໍ-
ລະຍົດ, ດື້ດ້ານ, ອວດສະຫາວ, ແລະເປັນຄົນຮັກຄວາມສະໜຸກຫລາຍກວ່າຮັກພຣະເຈົ້າ.
5ເຂົາກໍເຮັດເໝືອນຄົນນັບຖືພຣະເຈົ້າຢ່າງຖືກຕ້ອງ ແຕ່ວ່າລິດອຳນາດຂອງການນັບຖືນັ້ນ ເຂົາ
ກໍປະຕິເສດເສຍເຈົ້າຈົ່ງຫລີກໜີເສຍຈາກຄົນຢ່າງນັ້ນ. 6ເພາະໃນບັນດາຄົນເຫລົ່ານັ້ນ ມີຄົນທີ່ມັກ
ລ່ວງເຂົ້າໄປຕາມບ້ານເຮືອນ ກ້ຽວກ່ອມເອົາໃຈຜູ້ຍິງທີ່ເບົາປັນຍາໜາດ້ວຍຜິດບາບແລະຫລົງ-
ໄຫລໄປດ້ວຍຕັນຫາຕ່າງໆ ເອົາໄປເປັນຊະເລີຍ. 7ຍິງພວກນີ້ກໍຍອມຮ່ຳຮຽນຢູ່ສະເໝີແຕ່ບໍ່ອາດ
ຈະເຖິງການສັ່ງເກດຮູ້ຄວາມຈິງໄດ້ຈັກເທື່ອ. 8ຢາເນກັບຢຳເບຂັດຂວາງຕໍ່ສູ້ກັບໂມເຊສັນໃດ
ຄົນເຫລົ່ານີ້ກໍຂັດຂວາງຕໍ່ສູ້ກັບຄວາມຈິງສັນນັ້ນເໝືອນກັນ ເຂົາເປັນຄົນມີໃຈຊົ່ວຮ້າຍ ແລະໃນ
ດ້ານຄວາມເຊື່ອນັ້ນເຂົາໃຊ້ບໍ່ໄດ້. 9ແຕ່ເຂົາຈະກ້າວໜ້າຕໍ່ໄປອີກບໍ່ໄດ້ ເພາະວ່າຄວາມໂງ່ຂອງ
ເຂົານັ້ນຈະປະກົດແຈ້ງແກ່ຄົນທັງປວງ ເໝືອນດັ່ງຄວາມໂງ່ຂອງຊາຍສອງຄົນນັ້ນ.

## ສິ່ງສຸດທ້າຍທີ່ໂປໂລສັ່ງໄວ້ກັບຕີໂມທຽວ

10ບັດນີ້ເຈົ້າກໍໄດ້ຕິດຕາມເຮົາໃນດ້ານຄຳສອນ, ກິລິຍາ, ຄວາມມຸ້ງໝາຍ, ຄວາມເຊື່ອ,
ຄວາມພຽນ, ຄວາມຮັກ, ຄວາມໜັກແໜ້ນໝັ້ນຄົງ, 11ແລະການຖືກຂົ່ມເຫງກັບການທົນທຸກລຳ-
ບາກຕ່າງໆຂອງເຮົາ ຄືສິ່ງທີ່ໄດ້ເກີດແກ່ເຮົາໃນເມືອງອັນຕີໂອເຂຍ, ໃນເມືອງອີໂກນີອົນ, ແລະ
ໃນເມືອງລີຊະທາ ການຂົ່ມເຫງຕ່າງໆ ທີ່ເຮົາໄດ້ທົນເອົານັ້ນ ອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດ
ດຶງເຮົາອອກຈາກສິ່ງເຫລົ່ານັ້ນທັງໝົດ. 12ແທ້ຈິງ, ບັນດາຄົນທີ່ປາດຖະໜາຈະດຳເນີນຊີວິດ
ຄຣິສະຕຽນເປັນຄົນນັບຖືພຣະເຈົ້າຢ່າງຖືກຕ້ອງ ກໍຈະຖືກກົດຂີ່ຂົ່ມເຫງ. 13ແຕ່ຄົນຊົ່ວຮ້າຍແລະ
ຄົນປອມຕົວຈະກຳເລີບທະວີຂຶ້ນໄປ ລໍ້ລວງຄົນອື່ນໃຫ້ຫລົງ ແລະຕົວເຂົາເອງກໍຖືກລໍ້ລວງເໝືອນ
ກັນ. 14ແຕ່ຝ່າຍເຈົ້າ, ຈົ່ງດຳເນີນຕໍ່ໄປໃນສິ່ງທີ່ເຈົ້າໄດ້ຮຽນຮູ້ແລ້ວ ແລະໄດ້ເຊື່ອຢ່າງໝັ້ນຄົງ
ເຈົ້າກໍຮູ້ແລ້ວວ່າເຈົ້າໄດ້ຮຽນມາຈາກຜູ້ໃດ. 15ແລະຮູ້ແລ້ວວ່າ ຕັ້ງແຕ່ນ້ອຍມາແລ້ວເຈົ້າກໍຮູ້ພຣະ-
ທຳຄຳພີອັນສັກສິດ ຊຶ່ງສາມາດໃຫ້ເຈົ້າມີປັນຍານຳເຈົ້າໄປເຖິງຄວາມພົ້ນໄດ້ດ້ວຍທາງຄວາມ
ເຊື່ອໃນພຣະຄຣິດ ຄືພຣະເຢຊູ. 16ພຣະທຳຄຳພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະ-
ເຈົ້າ[ກ] ແລະເປັນປະໂຫຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້
ຖືກຕ້ອງ, ແລະການອົບຮົມໃນທາງຊອບທຳ. 17ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເລັດ
ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ.

# ບົດທີ 4

1ເຮົາສັ່ງເຈົ້າຕໍ່ພຣະພັກພຣະເຈົ້າ ແລະຕໍ່ພຣະພັກພຣະເຢຊູຄຣິດ ຜູ້ຈະຊົງພິພາກສາທັງຄົນ
ເປັນແລະຄົນຕາຍ ໂດຍອ້າງເຖິງການທີ່ພຣະອົງຈະຊົງສ່ອງສະຫວ່າງມາປະກົດ ແລະອ້າງເຖິງ
ລາຊະອານາຈັກຂອງພຣະອົງວ່າ. 2ຈົ່ງປະກາດພຣະທຳຈົ່ງເອົາໃຈໃສ່ເຮັດການທັງໃນເວລາມີ

---

[ກ]ໝາຍຄວາມວ່າ ໄດ້ອອກມາແຕ່ຄວາມຄຶດແຫ່ງພຣະເຈົ້າ ທໍ່ກັບເປົ່າລົມຫາຍໃຈອອກແຕ່ພຣະໂອດທົບ
ຂອງພຣະເຈົ້າ.

ໂອກາດແລະບໍ່ມີໂອກາດ ຈົ່ງຊັກຊວນດ້ວຍເຫດຜົນ ຈົ່ງເຕືອນສະຕິແລະຕັກເຕືອນ[ກ] ດ້ວຍ
ຄວາມພຽນອົດທົນທຸກຢ່າງໃນການສອນ. 3ເພາະຈະມີເວລາໜຶ່ງທີ່ເຂົາຈະບໍ່ທົນຮັບເອົາຄຳສອນ
ອັນມີຫລັກ ແຕ່ຕາມຄວາມປາດຖະໜາຂອງເຂົານັ້ນ ເຂົາຈະຮວບຮວມຄູໄວ້ສຳລັບເຂົາເອງເພື່ອ
ບັນເທົາຫູຄັນຂອງເຂົາ. 4ເຂົາຈະອວ່າຍຫູໜີຈາກຄວາມທ່ຽງທຳ ຕ່າວໄປຟັງນິຍາຍຕ່າງໆ. 5ແຕ່
ຝ່າຍເຈົ້າ, ຈົ່ງລະວັງຕົວໃຫ້ດີໃນການທັງປວງ ຈົ່ງອົດທົນຕໍ່ການຍາກລຳບາກ ຈົ່ງເຮັດໜ້າທີ່
ຂອງຜູ້ປະກາດຂ່າວປະເສີດ ແລະຈົ່ງປະຕິບັດໜ້າທີ່ການຂອງເຈົ້ານັ້ນໃຫ້ສຳເລັດ. 6ເພາະວ່າ
ຝ່າຍຕົວເຮົາ, ກຳລັງຈະຕົກເປັນເຄື່ອງບູຊາຢູ່ແລ້ວ ແລະເຖິງເວລາແລ້ວທີ່ເຮົາຈະຈາກໄປ. 7ເຮົາ
ໄດ້ອົດສາສູ້ໃນການແຂ່ງຂັນ ເຮົາໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ ເຮົາໄດ້ຮັກສາຄວາມເຊື່ອໄວ້
ແລ້ວ. 8ແຕ່ນີ້ຕໍ່ໄປພວງມາໄລຄືລາງວັນແຫ່ງຄວາມຊອບທຳ ຊົງຈັດໄວ້ຖ້າເຮົາແລ້ວ ຊຶ່ງອົງ
ພຣະຜູ້ເປັນເຈົ້າຜູ້ພິພາກສາອັນຍຸດຕິທຳ ຈະຊົງປະທານແກ່ເຮົາໃນວັນນັ້ນ ແລະບໍ່ແມ່ນແກ່ເຮົາ
ຜູ້ດຽວແຕ່ຈະຊົງປະທານແກ່ຄົນທັງປວງທີ່ມີໃຈຍິນດີໃນການຊົງສ່ອງສະຫວ່າງມາປະກົດຂອງ
ພຣະອົງ.

## ຄຳແນະນຳເລື່ອງສ່ວນຕົວ

9ຈົ່ງຮີບຮ້ອນໃຈມາຫາເຮົາໄວໆ. 10ເພາະວ່າ ເດມາ ໄດ້ຫລົງຮັກໂລກປະຈຸບັນນີ້ເສຍແລ້ວ
ແລະໄດ້ປະຖິ້ມເຮົາໄປຍັງເມືອງ ເທຊະໂລນິກ ເກເຊັນ ໄດ້ໄປຍັງແຂວງຄາລາເຕຍ ແລະຕີໂຕ
ໄດ້ໄປຍັງເມືອງດັນມາເຕຍ. 11ລູກາຜູ້ດຽວເທົ່ານັ້ນທີ່ຍັງຢູ່ນຳເຮົາ ຈົ່ງຊອກຫາມາຣະໂກເອົາມາ
ພ້ອມເຈົ້າ ເພາະເພິ່ນເປັນປະໂຫຍດແກ່ເຮົາຫລາຍສຳລັບການຮັບໃຊ້. 12ເຮົາໄດ້ໃຊ້ຕີຂີໂກໄປ
ຍັງເມືອງເອເຟໂຊແລ້ວ. 13ເມື່ອເຈົ້າມາ, ຈົ່ງເອົາເສື້ອຄຸມທີ່ເຮົາປະໄວ້ກັບກາຣະໂປທີ່ເມືອງໂທ-
ອາດນັ້ນມານຳດ້ວຍພ້ອມກັບໜັງສືທັງຫລາຍ ເປັນຕົ້ນວ່າໜັງສືທີ່ຂຽນໃສ່ແຜນໜັງນັ້ນ. 14ອາ-
ເລັກຊັນໂດຊ່າງທອງແດງນັ້ນໄດ້ທຳຮ້າຍຕໍ່ເຮົາຫລາຍຢ່າງ ອົງພຣະຜູ້ເປັນເຈົ້າຈະຊົງຕອບ
ແທນໃຫ້ສົມກັບການທີ່ລາວເຮັດນັ້ນ. 15ເຈົ້າຈົ່ງລະວັງຕົວລາວໃຫ້ດີດ້ວຍເພາະລາວໄດ້ຂັດຂວາງ
ຕໍ່ສູ້ຖ້ອຍຄຳຂອງເຮົາຢ່າງແຂງແຮງ. 16ເມື່ອເຮົາໄດ້ເວົ້າແກ້ຄະດີເທື່ອທຳອິດນັ້ນບໍ່ມີໃຜເຂົ້າຂ້າງ
ເຮົາຈັກຄົນ ທຸກຄົນໄດ້ປະຖິ້ມເຮົາໝົດ (ຂໍຢ່າຊົງຖືເປັນໂທດແກ່ເຂົາ). 17ແຕ່ອົງພຣະຜູ້ເປັນເຈົ້າ
ໄດ້ຊົງເຂົ້າຂ້າງເຮົາແລະຊົງຊູກຳລັງເຮົາຂຶ້ນໃຫ້ເຮົາປະກາດພຣະທຳຢ່າງຄົບຖ້ວນ ເພື່ອໃຫ້ພວກ
ຕ່າງຊາດທັງໝົດໄດ້ຍິນແລະອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດໃຫ້ເຮົາຫລຸດພົ້ນຈາກປາກສິງໂຕ
ນັ້ນ. 18ອົງພຣະຜູ້ເປັນເຈົ້າຈະຊົງໂຜດໃຫ້ເຮົາພົ້ນຈາກການຊົ່ວຮ້າຍທຸກຢ່າງ ແລະຊົງໂຜດເຮົາ
ລອດພົ້ນເຂົ້າສູ່ລາຊະອານາຈັກ ຄືແຜ່ນດິນສະຫວັນຂອງພຣະອົງ ພຣະລັດສະໝີຈົ່ງມີແກ່ພຣະ-
ອົງສືບໆ ໄປເປັນນິດ ອາແມນ.

## ຄຳສະແດງຄວາມຄິດເຖິງໃນຕອນທ້າຍ

19ຂໍຝາກຄວາມຄິດເຖິງມາຍັງປີສະກາກັບອາກີລາ ແລະຄົນໃນຄົວເຮືອນຂອງໂອເນຊີໂຟໂຣ.
20ເອຣາຊະໂຕໄດ້ຄ້າງຢູ່ທີ່ເມືອງໂກຣິນໂທ ແຕ່ສ່ວນໂທຟີໂມເຮົາກໍປະໄວ້ທີ່ເມືອງມີເລໂຕເພາະ
ເພິ່ນຍັງປ່ວຍຢູ່. 21ຈົ່ງອົດສາຮ້ອນໃຈມາຫາເຮົາກ່ອນລະດູໜາວ ຢູບູໂລ, ປູເດ, ລີໂນ, ກະໂລ-

[ກ]ຫລືວ່າ "ຈົ່ງຊູກຳລັງໃຈ."

ເດຍ, ແລະພີ່ນ້ອງທັງປວງ ຝາກຄວາມຄຶດເຖິງມາຍັງເຈົ້າເໝືອນກັນ. 22ຂໍໃຫ້ອົງພຣະຜູ້ເປັນ-
ເຈົ້າຊົງສະຖິດຢູ່ກັບວິນຍານຂອງເຈົ້າເທີນ. ຂໍໃຫ້ພຣະຄຸນຈົ່ງສະຖິດຢູ່ກັບເຈົ້າທັງຫລາຍເທີນ.

* * *

# ຈົດໝາຍຂອງໂປໂລທີ່ມີຂຽນໄປເຖິງ
# ຕີໂຕ

## ບົດທີ 1

1ຈາກ ໂປໂລ, ຜູ້ຮັບໃຊ້[ກ] ຂອງ ພຣະເຈົ້າ ແລະອັກຄະສາວົກຂອງ ພຣະເຢຊູຄຣິດ ເພື່ອສົ່ງ-
ເສີມຄວາມເຊື່ອຂອງຜູ້ທີ່ ພຣະເຈົ້າ ໄດ້ຊົງເລືອກໄວ້ນັ້ນ ແລະໃຫ້ສັງເກດຮູ້ຄວາມສັດຈິງຕາມການ
ນັບຖືພຣະເຈົ້າຢ່າງຖືກຕ້ອງ. 2ດ້ວຍຫວັງວ່າຈະໄດ້ຊີວິດອັນຕະຫລອດໄປເປັນນິດ ຊຶ່ງພຣະເຈົ້າ
ຜູ້ບໍ່ຊົງກ່າວຄຳຕົວະໄດ້ ໄດ້ຊົງສັນຍາໄວ້ຕັ້ງແຕ່ເດີມດຳບັນ. 3ແລະໃນເວລາທີ່ພຣະອົງໄດ້ຊົງ
ກຳນົດໄວ້ ກໍໄດ້ຊົງສະແດງພຣະທຳຂອງພຣະອົງໃຫ້ປະກົດດ້ວຍການປະກາດ ຊຶ່ງເຮົາໄດ້ຮັບ
ມອບໄວ້ຕາມພຣະບັນຊາຂອງ ພຣະເຈົ້າ ຜູ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ. 4ເຖິງ ຕີໂຕ, ຜູ້ເປັນ
ລູກແທ້ຂອງເຮົາໃນຄວາມເຊື່ອອັນດຽວກັນຂໍພຣະຄຸນແລະສັນຕິສຸກຊຶ່ງມາຈາກ ພຣະບິດາ ເຈົ້າ
ແລະຈາກ ພຣະເຢຊູຄຣິດ ພຣະຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ ຈົ່ງມີຢູ່ນຳເຈົ້າເທີນ.

### ງານຂອງຕີໂຕທີ່ເກາະກະເຣເຕ

5ເພາະເຫດນີ້ແຫລະ, ເຮົາໄດ້ປະເຈົ້າໄວ້ທີ່ເກາະ ກະເຣເຕ ກໍຄືເພື່ອເຈົ້າຈະໄດ້ຈັດແຈງພາ-
ລະກິດທີ່ບົກພ່ອງນັ້ນໃຫ້ຮຽບຮ້ອຍ ແລະໃຫ້ແຕ່ງຕັ້ງພວກເຖົ້າແກ່ໄວ້ໃນທຸກເມືອງ ຕາມທີ່ເຮົາໄດ້
ສັ່ງເຈົ້າໄວ້ແລ້ວນັ້ນ. 6ຄືຕັ້ງຜູ້ທີ່ບໍ່ມີຂໍ້ຕຳໜິ, ເປັນຜົວຂອງຍິງຄົນດຽວ, ມີລູກທີ່ມີຄວາມເຊື່ອ
ແລະລູກນັ້ນບໍ່ຖືກກ່າວຫາວ່າເປັນນັກເລງ ຫລືເປັນຄົນດື້ດ້ານ. 7ເພາະວ່າຜູ້ດູແລນັ້ນໃນຖານະທີ່
ເປັນຜູ້ຮັບມອບໝາຍຈາກ ພຣະເຈົ້າ ຕ້ອງເປັນຜູ້ທີ່ບໍ່ມີຂໍ້ຕຳໜິ, ບໍ່ເປັນຄົນຈອງຫອງ, ບໍ່ເປັນຄົນ
ເລືອດຮ້ອນ, ບໍ່ເປັນຄົນເມົາເຫລົ້າ, ບໍ່ເປັນຄົນອັນທະພານ, ບໍ່ເປັນຄົນໂລບເອົາກຳໄລໃນທາງບໍ່
ສັດຊື່. 8ແຕ່ໃຫ້ເປັນຄົນມີສັດທາເຫລື້ອມໃສຕ້ອນຮັບແຂກ, ເປັນຜູ້ຮັກຄວາມດີ, ເປັນຄົນມີສະຕິ
ອັນດີຮອບຄອບ, ເປັນຄົນຍຸດຕິທຳ, ເປັນຄົນບໍລິສຸດ, ເປັນຄົນຮູ້ຈັກບັງຄັບຕົນ. 9ເປັນຄົນຍຶດ-
ໝັ້ນໃນຫລັກອັນທ່ຽງທຳທີ່ຖືກຕ້ອງຕາມໂອວາດຄວາມສອນ ເພື່ອຈະສາມາດເຕືອນສະຕິດ້ວຍ
ຄຳສອນອັນມີຫລັກ ແລະຊີ້ແຈງແກ່ຄົນທີ່ຄັດຄ້ານຄຳສອນນັ້ນ.

10ເພາະວ່າມີຫລາຍຄົນທີ່ດື້ດ້ານ ກ່າວຄຳທີ່ບໍ່ມີແກ່ນສານ ແລະຫລອກລວງຄົນອື່ນໃຫ້ຫລົງ
ເປັນຕົ້ນວ່າ ພວກຢູ່ຝ່າຍພິທີຕັດ. 11ຈຳເປັນຕ້ອງອັດປາກເຂົາເສຍ ເຂົາເປັນຄົນລົ້ມບ້ານຂວ້ຳຄົວ
ເຮືອນໃຫ້ເສຍໄປ ໂດຍສອນອັນບໍ່ຄວນຈະສອນເພື່ອເອົາກຳໄລໃນທາງທຸຈະລິດ. 12ໃນພວກ
ເຂົາເອງມີຜູ້ໜຶ່ງເປັນຜູ້ທຳນວາຍໄດ້ກ່າວວ່າ, "ຊາວ ກະເຣເຕ ເປັນຄົນກ່າວຕົວະຢູ່ສະເໝີ, ເປັນ
ຄົນໂຫດຮ້າຍຢ່າງສັດ, ເປັນຄົນຂີ້ຄ້ານ, ກິນເກີນສ່ວນ." 13ຄຳທີ່ເພິ່ນອ້າງນີ້ເປັນຄວາມຈິງ
ດ້ວຍເຫດນີ້ເຈົ້າຈົ່ງຕໍ່ວ່າເຂົາຢ່າງແຂງແຮງ ເພື່ອເຂົາຈະໄດ້ມີຄວາມເຊື່ອອັນມີຫລັກ. 14ເພື່ອບໍ່ໃຫ້
ເຂົາເຊື່ອຟັງນິຍາຍຂອງພວກຢິວ ແລະບົດບັນຍັດຂອງມະນຸດທີ່ອວ່າຍໜ້າໜີອອກຈາກຄວາມ

[ກ]ພາສາເດີມວ່າ "ຂ້ອຍຂ້າ."

ຈິງ. [15]ສຳລັບຄົນຄົນສະອາດນັ້ນ ທຸກສິ່ງກໍສະອາດເສາະໃສ ແຕ່ວ່າສຳລັບຄົນຊົ່ວຮ້າຍ ແລະ
ຄົນທີ່ບໍ່ເຊື່ອນັ້ນ ບໍ່ມີສິ່ງໃດສະອາດຈັກຢ່າງ ແຕ່ຈິດໃຈແລະໃຈສຳນຶກຜິດແລະຊອບຂອງເຂົາກໍ
ຖືກຊົ່ວຮ້າຍໄປແລ້ວ. [16]ເຂົາປະກາດຕົວວ່າຮູ້ຈັກພຣະເຈົ້າ ແຕ່ວ່າໃນການເຮັດຂອງເຂົາ ເຂົາກໍ
ປະຕິເສດພຣະອົງ ເຂົາເປັນຄົນໜ້າກຽດໜ້າຊັງ ບໍ່ຍອມເຊື່ອຟັງໃຜ ແລະສຳລັບການດີອັນໃດກໍ
ໃຊ້ບໍ່ໄດ້ຈັກຢ່າງ.

# ບົດທີ 2

## ໂອວາດຄວາມສອນທີ່ມີຫລັກ

[1]ແຕ່ຝ່າຍເຈົ້າ, ຈົ່ງສັ່ງສອນໃຫ້ເໝາະສົມກັບໂອວາດຄຳສອນອັນມີຫລັກ. [2]ຄືຈົ່ງເຕືອນພວກ
ຊາຍທີ່ມີອາຍຸສູງໃຫ້ຮູ້ຈັກບັງຄັບຕົນ, ໃຫ້ເປັນຄົນສະຫງ່າຜ່າເຜີຍ, ເປັນຄົນມີສະຕິອັນດີຮອບ
ຄອບ, ເປັນຄົນມີຄວາມເຊື່ອ, ມີຄວາມຮັກ, ແລະມີຄວາມອົດທົນຕາມສົມຄວນ. [3]ຝ່າຍພວກຍິງ
ທີ່ມີອາຍຸສູງນັ້ນກໍເໝືອນກັນ ຈົ່ງໃຫ້ເຂົາມີກິລິຍາສົມກັບເປັນຄົນຂອງພຣະເຈົ້າ ຢ່າໃຫ້ເປັນຄົນ
ໃຊ້ຄຳນິນທາປະໝາດ ຫລືເປັນຄົນຕິດເຫລົ້າແວງຫລາຍ[ກ] ແຕ່ໃຫ້ເປັນຜູ້ສອນຄຸນງາມຄວາມດີ.
[4]ເພື່ອເປັນການແອບສອນພວກຍິງທີ່ຍັງໜຸ່ມໃຫ້ຮັກຜົວແລະລູກຂອງຕົນ. [5]ໃຫ້ເປັນຄົນມີສະຕິອັນ
ດີຮອບຄອບ, ເປັນຄົນບໍລິສຸດ, ເປັນຄົນເອົາໃຈໃສ່ໃນວຽກບ້ານການເຮືອນ, ເປັນຄົນມີໃຈເມດ
ຕາ, ແລະເປັນຄົນນ້ອມເຊື່ອຟັງຜົວຂອງຕົນ ເພື່ອພຣະທຳຂອງພຣະເຈົ້າຈະບໍ່ຖືກປະໝາດ.
[6]ຝ່າຍພວກຊາຍໜຸ່ມກໍເໝືອນກັນ ຈົ່ງຕັກເຕືອນເຂົາໃຫ້ມີສະຕິອັນດີຮອບຄອບ. [7]ຄືເຈົ້າເອງຈົ່ງ
ສະແດງຕົນເປັນແບບຢ່າງໃນການດີທຸກສິ່ງ ໃນຄຳສອນ, ຈົ່ງສະແດງຄວາມສຸດຈະລິດໃຈແລະ
ມີໃຈສູງສົ່ງ. [8]ແລະໃຊ້ຄວາມເວົ້າອັນມີຫລັກຊຶ່ງບໍ່ມີຜູ້ໃດຈະຕິໄດ້ ເພື່ອຝ່າຍຜູ້ຂັດຂວາງຈະໄດ້ຮັບ
ຄວາມລະອາຍ ໂດຍບໍ່ມີຄຳຊົ່ວອັນໃດຈະວ່າກ່າວພວກເຮົາໄດ້. [9]ຈົ່ງຕັກເຕືອນຂ້ອຍຂ້າໃຫ້ເຂົາ
ນ້ອມຟັງນາຍຂອງຕົນ, ໃຫ້ເຂົາເຮັດຖືກໃຈນາຍໃນທຸກສິ່ງ, ແລະຢ່າໃຫ້ເປັນຄົນຖຽງຄວາມ.
[10]ຢ່າໃຫ້ເປັນຄົນລັກໂລບເຊື່ອງບັງສິ່ງໃດ ແຕ່ໃຫ້ສັດຊື່ສຸດຈະລິດໃນທຸກສິ່ງ ເພື່ອວ່າໃນການທັງ
ປວງນັ້ນເຂົາຈະໄດ້ເທີດທູນພຣະກຽດຄຳສອນເລື່ອງພຣະເຈົ້າຜູ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ.

[11]ເພາະວ່າພຣະຄຸນຂອງພຣະເຈົ້າໄດ້ສ່ອງມາປະກົດແລ້ວ ເພື່ອນຳຄວາມພົ້ນມາໃຫ້ຄົນທັງ
ປວງ. [12]ແລະສອນເຮົາທັງຫລາຍໃຫ້ລະຖິ້ມຄວາມຊົ່ວອະທຳແລະກິເລດຕັນຫາຝ່າຍໂລກ ແລະ
ໃຫ້ດຳເນີນຊີວິດຢູ່ໃນສະໄໝນີ້ຢ່າງມີສະຕິອັນດີຮອບຄອບດ້ວຍຍຸດຕິທຳແລະນັບຖືພຣະເຈົ້າ
ຢ່າງຖືກຕ້ອງ. [13]ໃຫ້ຄອງຖ້າຄວາມສຸກທີ່ສົມກັບຄວາມຫວັງຂອງເຮົາ ຄື ການສ່ອງມາປະກົດ
ອັນຮຸ່ງເຮືອງຂອງພຣະເຈົ້າອົງໃຫຍ່ ຄື ພຣະເຢຊູຄຣິດ[ຂ] ຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ.
[14]ຜູ້ຊົງສະຫລະພຣະອົງເອງແທນເຮົາທັງຫລາຍ ເພື່ອຊົງໄຖ່ພວກເຮົາໃຫ້ພົ້ນຈາກຄວາມຊົ່ວອະ-
ທຳທັງໝົດ ແລະຊົງຊຳລະພວກເຮົາໃຫ້ສະອາດ ເພື່ອໃຫ້ເປັນພົນລະເມືອງຈຳພວກໜຶ່ງຂອງ
ພຣະອົງ ຄື ເປັນຄົນມີໃຈຮ້ອນຮົນສຳລັບເຮັດການດີ. [15]ຂໍ້ຄວາມຂ້າງເທິງນີ້ ເຈົ້າຈົ່ງໃຊ້ວ່າກ່າວ,
ຕັກເຕືອນ, ແລະບອກສອນເຂົາຢ່າງໜັກແໜ້ນ ຢ່າໃຫ້ຜູ້ໃດໝິ່ນປະໝາດເຈົ້າໄດ້.

---

[ກ]ພາສາເດີມວ່າ "ເປັນຂ້ອຍຂ້າແກ່ການກິນເຫລົ້າແວງຫລາຍ." [ຂ]ຫລືວ່າ "ພຣະເຈົ້າອົງໃຫຍ່ແລະພຣະ-
ເຢຊູຄຣິດ..."

# ບົດທີ 3

## ໃຫ້ມີໃຈພ້ອມສຳລັບການດີທຸກຢ່າງ

1ຈົ່ງເຕືອນສະຕິພວກເຂົາໃຫ້ຢູ່ໃຕ້ບັງຄັບຜູ້ປົກຄອງແລະຜູ້ມີອຳນາດ ຄືໃຫ້ນ້ອມຟັງແລະມີໃຈ
ພ້ອມທີ່ຈະເຮັດການດີທຸກຢ່າງ. 2ຢ່າໃຫ້ເຂົາໝິ່ນປະໝາດໃຜຈັກຄົນ ຢ່າໃຫ້ເປັນຄົນມັກຜິດຖຽງ
ກັນ ແຕ່ໃຫ້ເປັນຄົນເອົາອົກເອົາໃຈສະແດງຄວາມອ່ອນສຸພາບແກ່ຄົນທັງປວງ. 3ເພາະວ່າເມື່ອ
ກ່ອນນັ້ນພວກເຮົາເອງກໍເປັນຄົນໂງ່, ບໍ່ຍອມເຊື່ອຟັງ, ຖືກເຂົາຫລອກລວງໃຫ້ຫລົງ, ເປັນຂ້ອຍ
ຂ້າຂອງກິເລດຕັນຫາ ແລະການສະໜຸກສະໜານຫລາຍປະການ, ເຄີຍໃຊ້ເວລາໃນການຄິດ
ຮ້າຍແລະໃນຄວາມເຫິງສາ, ເປັນຄົນໜ້າຊັງແລະກຽດຊັງກັນ. 4ແຕ່ເມື່ອພຣະເມດຕາຂອງ
ພຣະເຈົ້າ ຜູ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ແລະຄວາມຮັກຂອງພຣະອົງເພື່ອມະນຸດທັງຫລາຍ
ໄດ້ສ່ອງມາປະກົດແລ້ວ. 5ພຣະອົງໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ບໍ່ແມ່ນຍ້ອນກິດຈະການທີ່
ຊອບທຳທີ່ພວກເຮົາເອງໄດ້ເຮັດ ແຕ່ພຣະອົງໄດ້ຊົງພຣະກະລຸນາຊຳລະໃຫ້ພວກເຮົາມີໃຈບັງເກີດ
ໃໝ່ ແລະຊົງສ້າງພວກເຮົາຂຶ້ນໃໝ່ໂດຍພຣະວິນຍານບໍລິສຸດ. 6ພຣະວິນຍານອົງນັ້ນ, ພຣະ-
ເຈົ້າໄດ້ຊົງຖອກໃສ່ເຮົາທັງຫລາຍຢ່າງບໍລິບູນ ໂດຍພຣະເຢຊູຄຣິດ ພຣະຜູ້ຊົງໂຜດໃຫ້ພົ້ນຂອງ
ເຮົາທັງຫລາຍ. 7ເພື່ອວ່າ, ເມື່ອຊົງປະກາດໄວ້ວ່າພວກເຮົາເປັນຄົນຊອບທຳດ້ວຍພຣະຄຸນຂອງ
ພຣະອົງນັ້ນ ແລ້ວພວກເຮົາກໍຈະໄດ້ຮັບມໍລະດົກ ຄືຊີວິດອັນຕະຫລອດໄປເປັນນິດຕາມຄວາມ
ຫວັງ.

8ຄຳນີ້ເປັນຄຳສັດຈິງ, ເຮົາປາດຖະໜາໃຫ້ເຈົ້າເນັ້ນເຖິງເລື່ອງເຫລົ່ານີ້ ເພື່ອຄົນທັງຫລາຍທີ່
ເຊື່ອໃນພຣະເຈົ້າແລ້ວ ຈະເອົາໃຈໃສ່ເຮັດການດີ ການເຫລົ່ານີ້ດີ ແລະມີປະໂຫຍດແກ່ຄົນທັງ
ປວງ. 9ແຕ່ເຈົ້າຈົ່ງເວັ້ນເສຍຈາກການໂຈດຖຽງກັນຢ່າງໂງ່, ຈາກເລື່ອງສຳລັບວົງຕະກຸນ, ຈາກ
ການຜິດຖຽງກັນ, ແລະຈາກການວິວາດຕໍ່ສູ້ກັນດ້ວຍເລື່ອງພຣະບັນຍັດ ເພາະເປັນການບໍ່ມີປະ-
ໂຫຍດທັງເປັນເລື່ອງເປົ່າໆ. 10ຄົນໃດທີ່ຍຸແຫຍ່ໃຫ້ແຕກເປັນນິກາຍຕ່າງກັນ ເມື່ອໄດ້ເຕືອນສະຕິ
ຜູ້ນັ້ນເທື່ອໜຶ່ງຫລືສອງເທື່ອແລ້ວ ຢ່າກ່ຽວຂ້ອງກັບເພິ່ນອີກ. 11ເພາະຮູ້ແລ້ວວ່າ ຄົນຢ່າງນັ້ນເປັນ
ຄົນພິກປີ້ນຫລົງໄປເຮັດຜິດເຮັດບາບ ຈຶ່ງປັບໂທດໃສ່ຕົນເອງ.

## ຄຳແນະນຳສ່ວນຕົວ

12ເມື່ອເຮົາໃຊ້ອາເຕມາຫລືຕີຂີໂກມາຫາເຈົ້າ ເຈົ້າຈົ່ງພະຍາຍາມຮີບໄປຫາເຮົາທີ່ເມືອງນິໂກ-
ໂປລີ ເພາະເຮົາຕັ້ງໃຈຈະອາໃສຢູ່ທີ່ນັ້ນຈົນໝົດລະດູໜາວ. 13ຈົ່ງອິດສາພະຍາຍາມຊ່ອຍສົ່ງເຊ-
ນາຜູ້ເປັນທະນາຍຄວາມກັບອາໂປໂລອອກເດີນທາງໄປ ຢ່າໃຫ້ເຂົາຂັດສົນສິ່ງໃດ. 14ແຕ່ພວກ
ເຮົານັ້ນຕ້ອງໃຫ້ເຂົາຮຽນຮູ້ທີ່ຈະເຮັດການດີເໝືອນກັນ ເພື່ອຈະເປັນປະໂຫຍດເມື່ອເຖິງຄາວຈຳ-
ເປັນ ແລະເພື່ອເຂົາຈະບໍ່ເປັນຄົນທີ່ໄຮ້ຜົນ. 15ບັນດາຜູ້ທີ່ຢູ່ກັບເຮົາກໍຝາກຄວາມຄິດເຖິງມາຍັງ
ເຈົ້າ ເຈົ້າຈົ່ງສົ່ງຄວາມຄິດເຖິງຂອງພວກເຮົາໄປຍັງຄົນທັງປວງທີ່ຮັກເຮົາໃນຄວາມເຊື່ອອັນດຽວ
ກັນ. ຂໍພຣະຄຸນຈົ່ງສະຖິດຢູ່ກັບເຈົ້າທັງຫລາຍເທີນ.

* * *

# ຈົດໝາຍຂອງໂປໂລ ທີ່ມີໄປເຖິງ
# ຟີເລໂມນ

1ໂປໂລ ຜູ້ຖືກຈຳຈອງຢູ່ເພາະພຣະເຢຊູຄຣິດ ແລະຕີໂມທຽວນ້ອງຂອງເຮົາ, 2ເຖິງ ຟີເລ-
ໂມນ ເພື່ອນຮ່ວມງານທີ່ຮັກຂອງເຮົາ, ກັບຄຣິສຕະຈັກທີ່ຢູ່ໃນເຮືອນຂອງເຈົ້າ, ແລະອັບເຟຍ
ນ້ອງສາວ, ກັບອາຂິໂປ ຜູ້ເປັນເພື່ອນທະຫານດ້ວຍກັນກັບເຮົາ. 3ຂໍພຣະຄຸນ ແລະສັນຕິສຸກ
ຈາກພຣະບິດາເຈົ້າຂອງເຮົາທັງຫລາຍ ແລະຈາກພຣະເຢຊູຄຣິດເຈົ້າ ຈົ່ງມີຢູ່ກັບເຈົ້າທັງຫລາຍ
ເທີ້ນ.

## ຄວາມຮັກແລະຄວາມເຊື່ອຂອງຟີເລໂມນ

4ຟີເລໂມນເອີຍ, ເຮົາຂອບພຣະຄຸນພຣະຜູ້ເປັນເຈົ້າຂອງເຮົາຢູ່ສະເໝີ ແລະລະນຶກເຖິງເຈົ້າ
ເມື່ອເຮົາອ້ອນວອນ. 5ເພາະເຮົາໄດ້ຮັບຂ່າວເລື່ອງຄວາມຮັກແລະຄວາມເຊື່ອຂອງເຈົ້າ ທີ່ເຈົ້າມີຕໍ່
ພຣະເຢຊູເຈົ້າ ແລະຕໍ່ບັນດາໄພ່ພົນທັງປວງຂອງພຣະເຈົ້າ. 6ເຮົາໄດ້ອ້ອນວອນຂໍໃຫ້ການເຂົ້າ
ສ່ວນໃນຄວາມເຊື່ອຂອງເຈົ້ານັ້ນ ຈົ່ງໄດ້ເກີດຜົນ ຄືເພີ່ມພູນຄວາມສັງເກດຮູ້ໃນການດີທຸກຢ່າງ
ທີ່ພວກເຮົາມີໃນພຣະຄຣິດ. 7ນ້ອງເອີຍ, ເຮົາມີຄວາມຍິນດີຫລາຍ ແລະໄດ້ຮັບການຊູໃຈເພາະ
ຄວາມຮັກຂອງເຈົ້າ ຈິດໃຈຂອງໄພ່ພົນຂອງພຣະເຈົ້າໄດ້ຊຸ່ມເຢັນຂຶ້ນເພາະເຈົ້າ.

## ໂປໂລຂໍຮ້ອງເລື່ອງໂອເນຊີໂມ

8ເຫດສັນນັ້ນ, ເຖິງແມ່ນວ່າຍ້ອນເຮົາເປັນພີ່ນ້ອງກັນໃນພຣະຄຣິດ ເຮົາມີໃຈກ້າພໍທີ່ຈະສັ່ງ
ເຈົ້າໃຫ້ເຮັດສິ່ງທີ່ຄວນເຮັດ. 9ແຕ່ເພາະເຫັນແກ່ຄວາມຮັກ ເຮົາຈຶ່ງຂໍຮ້ອງເຈົ້າກໍດີກວ່າ ເຮົາ, ຄື
ໂປໂລ ຜູ້ເປັນລາຊະທູດຂອງພຣະເຢຊູຄຣິດ ແລະບັດນີ້ໄດ້ຖືກຈຳຈອງຢູ່ເພາະເຫັນແກ່ພຣະອົງ
ດ້ວຍ.[ກ] 10ເຮົາຂໍຮ້ອງເຈົ້າດ້ວຍເລື່ອງໂອເນຊີໂມ,[ຂ] ລູກຂອງເຮົາ ທີ່ເຮົາໄດ້ເກີດເປັນພໍ່ຂອງ
ລາວຝ່າຍຄວາມເຊື່ອ ເມື່ອເຮົາຖືກຈຳຈອງຢູ່. 11ເມື່ອກ່ອນ, ລາວບໍ່ເປັນປະໂຫຍດແກ່ເຈົ້າ ແຕ່
ບັດນີ້ກໍເປັນປະໂຫຍດແກ່ເຈົ້າແລະແກ່ເຮົາເໝືອນກັນ. 12ບັດນີ້ເຮົາໄດ້ໃຊ້ລາວຄືນມາຫາເຈົ້າ
ໂອເນຊີໂມຜູ້ນີ້ທໍ່ກັບໝາກຫົວໃຈຂອງເຮົາ. 13ເຮົາຢາກໃຫ້ລາວຢູ່ກັບເຮົາ ເພື່ອລາວຈະໄດ້ບົວ-
ລະບັດເຮົາແທນເຈົ້າ ໃນລະຫວ່າງທີ່ເຮົາຖືກຈຳຈອງຢູ່ເພາະຂ່າວປະເສີດນັ້ນ. 14ແຕ່ວ່າເຮົາບໍ່
ຢາກເຮັດສິ່ງໃດກ່ອນໄດ້ຮັບຄວາມເຫັນຈາກເຈົ້າ ເພື່ອຄຸນຄວາມດີທີ່ເຈົ້າເຮັດນັ້ນຈະບໍ່ເປັນການ
ຂົ່ມໃຈ ແຕ່ໃຫ້ເປັນຕາມຄວາມປະສົງຂອງເຈົ້າດ້ວຍ. 15ເພາະວ່າບາງທີອາດຈະເປັນເພາະເຫດນີ້
ທີ່ໃຫ້ລາວໄດ້ພາກຈາກໄປຈັກຄາວໜຶ່ງເພື່ອເຈົ້າຈະໄດ້ຮັບລາວກັບຄືນມາຢູ່ອີກຕໍ່ໄປ. 16ບໍ່ແມ່ນ
ລາວຈະເປັນຂ້ອຍຂ້າຕໍ່ໄປແຕ່ດີກວ່າຂ້ອຍຂ້າອີກ ຄືເປັນອ້າຍນ້ອງທີ່ຮັກ ລາວເປັນທີ່ຮັກຂອງ
ເຮົາ ແຕ່ຄົງຈະເປັນທີ່ຮັກຂອງເຈົ້າຫລາຍກວ່ານັ້ນອີກ ທັງໃນຖານະເປັນເພື່ອນມະນຸດ ແລະ
ເປັນເພື່ອນຄຣິສະຕຽນດ້ວຍກັນ. 17ເຫດສັນນັ້ນຖ້າເຈົ້າຖືວ່າເຮົາເປັນເພື່ອນຮ່ວມງານຂອງເຈົ້າ

---

[ກ]ຫລືວ່າ “ໂປໂລ ຜູ້ເຖົ້າທັງເປັນຜູ້ຖືກມັດຢູ່ບັດນີ້ເພາະເຫັນແກ່ພຣະຄຣິດເຢຊູ.” [ຂ]ໂອເນຊີໂມ ແປວ່າ ທີ່
ເປັນປະໂຫຍກ, ທີ່ໃຫ້ໄດ້ກຳໄລ, ທີ່ຊ່ອຍເຫລືອ, ຫລືທີ່ສົງເຄາະ.

ກໍຈົ່ງຮັບລາວໄວ້ເໝືອນຮັບຕົວເຮົາເອງ. [18]ແລະຖ້າລາວໄດ້ເຮັດຜິດພາດຕໍ່ເຈົ້າປະການໃດ ຫລື
ໄດ້ເປັນໜີ້ເຈົ້າ ກໍໃຫ້ເຈົ້າຄິດເອົານຳເຮົາ. [19]ຝ່າຍເຮົາໄດ້ລົງມືຂຽນໄວ້ວ່າ, “ເຮົາ, ໂປໂລ ຈະໃຊ້
ແທນໃຫ້” ແຕ່ສ່ວນເຈົ້າເປັນໜີ້ເຮົານັ້ນ ຄືຊີວິດຂອງເຈົ້າເອງ ເຮົາຈະບໍ່ອ້າງເຖິງ. [20]ດັ່ງນີ້ແຫລະ
ນ້ອງເອີຍ, ຂໍໃຫ້ເຮົາໄດ້ຮັບປະໂຫຍດຈາກເຈົ້າເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ໃຫ້ໃຈຂອງ
ເຮົາຊຸ່ມເຢັນຂຶ້ນໃນຖານະເປັນຄຣິສະຕຽນຮ່ວມກັນ. [21]ເຮົາມີຄວາມໝັ້ນໃຈວ່າເຈົ້າຈະເຊື່ອຟັງ
ເຮົາ ຈຶ່ງໄດ້ຂຽນຈົດໝາຍມາເຖິງເຈົ້າເພາະຮູ້ວ່າເຈົ້າຈະເຮັດລື່ນກວ່າທີ່ເຮົາເວົ້ານັ້ນອີກ. [22]ແຕ່
ຢ່າງໃດກໍດີ, ເຈົ້າຈົ່ງຈັດແຈງທີ່ພັກໄວ້ຖ້າເຮົາ ເພາະເຮົາຫວັງໃຈວ່າພຣະເຈົ້າຈະຊົງໂຜດໃຫ້ເຮົາ
ມາຫາເຈົ້າອີກ ຕາມຄວາມອ້ອນວອນຂອງພວກເຈົ້າ.

## ຄຳສະແດງຄວາມຄິດເຖິງໃນຕອນທ້າຍ

[23]ເອປາຟາ, ຜູ້ຖືກຈຳຈອງດ້ວຍກັນກັບເຮົາ ເພາະເຫັນແກ່ພຣະເຢຊູຄຣິດ ກໍຝາກຄວາມຄິດ
ເຖິງມາຍັງເຈົ້າ. [24]ມາຣະໂກ, ອາຣິດຕາໂຂ, ເດມາ, ແລະລູກາເພື່ອນຮ່ວມງານຂອງເຮົາ ກໍ
ຝາກຄວາມຄິດເຖິງມາຍັງເຈົ້າດ້ວຍ. [25]ຂໍພຣະຄຸນຂອງພຣະເຢຊູຄຣິດເຈົ້າ ຈົ່ງສະຖິດຢູ່ກັບຈິດ
ວິນຍານຂອງເຈົ້າທັງຫລາຍເທີ້ນ.

* * *

# ຈົດໝາຍທີ່ມີໄປເຖິງຊາວ
# ເຮັບເຣີ

## ບົດທີ 1

### ພຣະເຈົ້າຊົງກ່າວທາງພຣະບຸດຂອງພຣະອົງ

[1]ໃນສະໄໝກ່ອນ ພຣະເຈົ້າ ໄດ້ຊົງກ່າວຫລາຍເທື່ອດ້ວຍວິທີຕ່າງໆ ແກ່ບັນພະບຸລຸດຂອງເຮົາ
ທັງຫລາຍທາງພວກຜູ້ປະກາດພຣະທຳ. [2]ແຕ່ໃນຄາວສຸດທ້າຍນີ້ພຣະອົງໄດ້ຊົງກ່າວແກ່ເຮົາທັງ-
ຫລາຍທາງ ພຣະບຸດ ຜູ້ຊຶ່ງພຣະອົງໄດ້ຊົງຕັ້ງໃຫ້ເປັນຜູ້ຮັບສັບພະສິ່ງທັງປວງເປັນມໍລະດົກ ແລະ
ດ້ວຍ ພຣະບຸດ ນັ້ນພຣະອົງໄດ້ຊົງສ້າງໂລກທັງຫລາຍ. [3]ພຣະບຸດ ນັ້ນເປັນແສງສະທ້ອນພຣະ-
ສະຫງ່າລາສີຂອງ ພຣະເຈົ້າ ແລະມີສະພາບເປັນແບບພິມດຽວກັນກັບພຣະອົງ ແລະຊົງຄໍ້າຊູພິ-
ພົບໂລກໄວ້ດ້ວຍພຣະວັດຈະນະອັນອັນຊົງລິດຂອງພຣະອົງ ເມື່ອພຣະອົງຊົງຊໍາລະຄວາມຜິດ
ບາບແລ້ວ ກໍຊົງປະທັບຢູ່ເບື້ອງຂວາຂອງຜູ້ຊົງລິດທານຸພາບໃນບ່ອນສູງ.

### ພຣະບຸດຊົງເປັນຜູ້ປະເສີດເລີດລໍ້າກວ່າເທວະດາ

[4]ອັນໜຶ່ງ, ພຣະເຈົ້າ ໄດ້ຊົງປະທານນາມຍົດອັນປະເສີດເລີດລໍ້າກວ່າເທວະດາໃຫ້ພຣະອົງ
ຢ່າງໃດ ພຣະອົງກໍຊົງເກີດເປັນຜູ້ປະເສີດເລີດລໍ້າກວ່າເທວະດາຢ່າງນັ້ນ.

[5]ເພາະວ່າມີຕົນໃດແດ່ໃນບັນດາເທວະດາທີ່ ພຣະເຈົ້າ ໄດ້ຊົງກ່າວວ່າ, "ທ່ານເປັນບຸດຂອງເຮົາ
ວັນນີ້ເຮົາໄດ້ໃຫ້ກໍາເນີດແກ່ທ່ານ"ຫລືຊົງກ່າວອີກວ່າ, "ເຮົາຈະເປັນບິດາຂອງທ່ານແລະທ່ານຈະ
ເປັນບຸດຂອງເຮົາ." [6]ແລະອີກເທື່ອໜຶ່ງ, ເມື່ອພຣະອົງຊົງນໍາພຣະບຸດອົງກົກເຂົ້າມາໃນໂລກ ກໍ
ຊົງກ່າວວ່າ, "ໃຫ້ບັນດາເທວະດາຂອງ ພຣະເຈົ້າ ຂາບໄຫວ້ທ່ານ." [7]ສ່ວນເທວະດາເຫລົ່ານັ້ນ
ພຣະອົງຊົງກ່າວວ່າ, "ພຣະອົງຊົງບັນດານໃຫ້ເທວະດາຂອງພຣະອົງເປັນເໝືອນລົມແລະຊົງ
ບັນດານໃຫ້ພວກຜູ້ຮັບໃຊ້ຂອງພຣະອົງເປັນເໝືອນແປວໄຟ." [8]ແຕ່ສ່ວນພຣະບຸດນັ້ນພຣະອົງຊົງ
ກ່າວວ່າ,

"ຂ້າແດ່ພຣະຜູ້ເປັນເຈົ້າ, ລາຊະບັນລັງຂອງພຣະອົງ
  ກໍຕັ້ງຢູ່ເປັນນິດຕະຫລອດໄປ
ພຣະຄະທາແຫ່ງລາຊະອານາຈັກຂອງພຣະອົງ
  ກໍເປັນພຣະຄະທາອັນທ່ຽງທຳ.
[9] ພຣະອົງຊົງຮັກຄວາມຊອບທຳ
  ແລະຊົງກຽດຊັງການອະທຳ
ເພາະສັນນັ້ນ ພຣະເຈົ້າ, ຄືພຣະເຈົ້າຂອງພຣະອົງ
  ໄດ້ຊົງຫົດສົງພຣະອົງໄວ້
ດ້ວຍນໍ້າມັນແຫ່ງຄວາມຍິນດີ

ຫລາຍກວ່າພຣະສະຫາຍທັງປວງຂອງພຣະອົງ.”

[10]ແລະ,

“ຂ້າແດ່ອົງພຣະຜູ້ເປັນເຈົ້າ, ເມື່ອຕົ້ນເດີມ
ພຣະອົງຊົງວາງຮາກແຜ່ນດິນໂລກໄວ້
ແລະຟ້າສະຫວັນເປັນກິດຈະການແຫ່ງພຣະຫັດຂອງພຣະອົງ.
11 ສິ່ງເຫລົ່ານີ້ຈະດັບສູນໄປ ແຕ່ພຣະອົງຊົງດຳລົງຢູ່
ສິ່ງເຫລົ່ານີ້ຈະເກົ່າແກ່ໄປໝົດເໝືອນດັ່ງເຄື່ອງນຸ່ງຫົ່ມ.
12 ພຣະອົງຈະຊົງມ້ວນສິ່ງເຫລົ່ານີ້ໄວ້
ເໝືອນດັ່ງມ້ວນເສື້ອຄຸມ [ຄືມ້ວນເສື້ອໃຫຍ່]
ແລະສິ່ງເຫລົ່ານີ້ຈະປ່ຽນແປງໄປ
ແຕ່ຝ່າຍພຣະອົງຍັງຊົງເປັນຢ່າງເດີມ
ແລະປີເດືອນຂອງພຣະອົງຈະບໍ່ສິ້ນສຸດ.”

[13]ນອກຈາກນັ້ນພຣະອົງຊົງເຄີຍກ່າວແກ່ເທວະດາຕົນໃດວ່າ, “ຈົ່ງນັ່ງເບື້ອງຂວາມືຂອງເຮົາ
ຈົນກວ່າເຮົາຈະປາບສັດຕູຂອງທ່ານໃຫ້ຢູ່ໃຕ້ຕີນຂອງທ່ານ.” [14]ຝູງເທວະດາທັງປວງນັ້ນ ແມ່ນ
ວິນຍານຮັບໃຊ້ທີ່ພຣະເຈົ້າຊົງໃຊ້ມາບົວລະບັດບັນດາຜູ້ທີ່ຈະໄດ້ຮັບຄວາມລອດພົ້ນເປັນມໍລະດົກ
ບໍ່ແມ່ນຫລື.

# ບົດທີ 2

## ຄວາມລອດພົ້ນອັນໃຫຍ່ຫລວງ

[1]ເຫດສັນນັ້ນພວກເຮົາຄວນເອົາໃຈໃສ່ ໃນຂໍ້ຄວາມທີ່ພວກເຮົາໄດ້ຍິນໄດ້ຟັງນັ້ນໃຫ້ຫລາຍຂຶ້ນ
ອີກ ຢ້ານວ່າພວກເຮົາຈະລ່ວງກາຍໄປຈາກຂໍ້ຄວາມເຫລົ່ານັ້ນ. [2]ດ້ວຍວ່າເມື່ອຖ້ອຍຄຳຊຶ່ງເທວະ-
ດາໄດ້ກ່າວນັ້ນປະກົດເປັນຄວາມຈິງ ແລະການລ່ວງລະເມີດກັບການບໍ່ເຊື່ອຟັງທຸກຢ່າງ ໄດ້ຮັບ
ຜົນຕອບສະໜອງຕາມຄວາມຍຸດຕິທຳແລ້ວ. [3]ດັ່ງນັ້ນ, ຖ້າພວກເຮົາລະເລີຍຕໍ່ຄວາມລອດພົ້ນ
ອັນໃຫຍ່ຫລວງນີ້ ພວກເຮົາຈະໜີພົ້ນໄປໄດ້ຢ່າງໃດ ຄວາມພົ້ນນັ້ນອົງພຣະຜູ້ເປັນເຈົ້າໄດ້ຊົງ
ປະກາດໃນເວລາທີ່ວທີ ແລະບັນດາຜູ້ທີ່ໄດ້ຍິນກໍຢືນຢັນແກ່ພວກເຮົາວ່າເປັນຄວາມຈິງ. [4]ທັງນີ້
ພຣະເຈົ້າກໍຊົງເປັນພະຍານຮ່ວມກັນກັບເຂົາ ໂດຍຊົງສະແດງໝາຍສຳຄັນ, ການອັດສະຈັນ,
ການອິດທິລິດຕ່າງໆ ແລະໂດຍຂອງປະທານຈາກ[ກ] ພຣະວິນຍານບໍລິສຸດ ຊຶ່ງຊົງປະທານ
ຕາມນ້ຳພຣະໄທຂອງພຣະອົງ.

## ຜູ້ນຳໄປສູ່ຄວາມພົ້ນ

[5]ເພາະວ່າໂລກໜ້າທີ່ເຮົາກ່າວເຖິງນັ້ນ ພຣະອົງບໍ່ໄດ້ຊົງມອບໃຫ້ຢູ່ໃຕ້ບັງຄັບຝູງເທວະດາ.
[6]ແຕ່ໃນບ່ອນໜຶ່ງມີຄຳກ່າວເປັນພະຍານວ່າ,

“ມະນຸດເປັນຜູ້ໃດທີ່ພຣະອົງເຈົ້າຈະຊົງລະນຶກເຖິງ

[ກ]ຫລື “ຄື”.

ຫລືບຸດມະນຸດເປັນຜູ້ໃດທີ່ຈະຊົງຫ່ວງໃຍ.

7 ພຣະອົງເຈົ້າຊົງບັນດານໃຫ້ມະນຸດນັ້ນ

ຕໍ່າກວ່າເທວະດາພຽງຊົ່ວລະຍະໜຶ່ງ[ກ]

ແລະຊົງເອົາສະຫງ່າລາສີກັບຍົດສັກ ເປັນພວງມາໄລມາສວມໃຫ້.

8 ພຣະອົງເຈົ້າຊົງມອບສິ່ງທັງປວງ

ໃຫ້ຢູ່ພາຍໃຕ້ຕີນຂອງເພິ່ນ"

ໃນການທີ່ພຣະອົງຊົງມອບສິ່ງທັງປວງໃຫ້ຢູ່ໃຕ້ອຳນາດຂອງເພິ່ນນັ້ນ ບໍ່ມີສິ່ງໃດທີ່ຊົງປະໄວ້
ນອກເໜືອຈາກອຳນາດຂອງເພິ່ນ ແຕ່ບັດນີ້ພວກເຮົາຍັງບໍ່ເຫັນວ່າສິ່ງທັງປວງຢູ່ໃຕ້ອຳນາດຂອງ
ເພິ່ນ. 9ແຕ່ພວກເຮົາກໍເຫັນ ພຣະເຢຊູ ຜູ້ຊຶ່ງພຣະອົງຊົງບັນດານໃຫ້ຕໍ່າກວ່າເທວະດາພຽງຊົ່ວ
ລະຍະໜຶ່ງນັ້ນ ໄດ້ຊົງຮັບພຣະສະຫງ່າລາສີແລະພຣະກຽດເປັນພວງມາໄລ ເພາະທີ່ພຣະອົງຊົງ
ສິ້ນພຣະຊົນດ້ວຍຄວາມທໍລະມານ ທັງນີ້, ໂດຍພຣະຄຸນຂອງ ພຣະເຈົ້າ ພຣະອົງຈຶ່ງໄດ້ຊົງຊີມ
ລົດຄວາມຕາຍແທນມະນຸດທຸກຄົນ. 10ດ້ວຍວ່າ ໃນການທີ່ ພຣະເຈົ້າ ຈະຊົງພາບຸດຫລວງຫລາຍ
ໄປສູ່ສະຫງ່າລາສີນັ້ນ ກໍເປັນການເໝາະສົມຢູ່ແລ້ວທີ່ ພຣະເຈົ້າ ຜູ້ຊຶ່ງທຸກສິ່ງດຳລົງຢູ່ໂດຍພຣະ-
ອົງແລະເພື່ອພຣະອົງ ຈະຊົງໃຫ້ຜູ້ນຳທາງຄວາມລອດພົ້ນໃຫ້ເຂົາເຫລົ່ານັ້ນ ໃຫ້ເຖິງທີ່ສຳເລັດ
ໂດຍການທົນທຸກທໍລະມານ. 11ເພາະວ່າທັງຜູ້ທີ່ຊຳລະໃຫ້ບໍລິສຸດ ແລະຄົນເຫລົ່ານັ້ນທີ່ຖືກຊຳລະ
ໃຫ້ບໍລິສຸດ ກໍມາຈາກບ່ອນດຽວກັນ ເພາະສັນນັ້ນພຣະອົງຈຶ່ງບໍ່ຊົງລະອາຍໃນການທີ່ຈະຊົງເອີ້ນ
ເຂົາເຫລົ່ານັ້ນວ່າເປັນ "ອ້າຍນ້ອງ". 12ດັ່ງທີ່ພຣະອົງຊົງກ່າວວ່າ, "ເຮົາຈະປະກາດພຣະນາມ
ຂອງພຣະອົງ ແກ່ອ້າຍນ້ອງຂອງເຮົາ ເຮົາຈະຮ້ອງເພງສັນລະເສີນພຣະອົງ ໃນທ່າມກາງຊຸມນຸມ-
ຊົນ." 13ແລະຊົງກ່າວອີກວ່າ, "ຝ່າຍເຮົາ, ເຮົາກໍຈະວາງໃຈໃນພຣະອົງ"ທັງຊົງກ່າວອີກວ່າ, "ນີ້
ແຫລະ, ຕົວເຮົາກັບບຸດທັງຫລາຍທີ່ ພຣະເຈົ້າ ໄດ້ຊົງປະທານແກ່ເຮົານັ້ນ." 14ເຫດສັນນັ້ນ, ເພາະ
ພວກລູກໄດ້ຮ່ວມຊາດມະນຸດອັນດຽວກັນ ຝ່າຍພຣະອົງຈຶ່ງໄດ້ຊົງຮ່ວມຊາດມະນຸດເໝືອນກັນ
ເພື່ອໂດຍທາງຄວາມຕາຍນັ້ນ ພຣະອົງຈະໄດ້ຊົງທຳລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍ ຄືພະ-
ຍາມານ. 15ແລະຈະໄດ້ຊົງປ່ອຍຄົນທັງປວງທີ່ເປັນຂ້ອຍຂ້າຍ້ອນຢ້ານຄວາມຕາຍຕະຫລອດຊີ-
ວິດນັ້ນ ໃຫ້ລອດພົ້ນ. 16ຈິງແທ້, ພຣະອົງບໍ່ໄດ້ຊົງເປັນຫ່ວງພວກເທວະດາ ແຕ່ຊົງເປັນຫ່ວງ
ເຊື້ອສາຍຂອງ ອັບຣາຮາມ. 17ເຫດສັນນັ້ນພຣະອົງຈຶ່ງຊົງຕ້ອງການເປັນເໝືອນອ້າຍນ້ອງຂອງ
ຕົນທຸກຢ່າງ ເພື່ອວ່າພຣະອົງຈະໄດ້ຊົງເປັນມະຫາປະໂລຫິດ ຜູ້ປະກອບດ້ວຍຄວາມເມດຕາ
ແລະຄວາມສັດຊື່ໃນການງານທຸກຢ່າງທີ່ກ່ຽວກັບ ພຣະເຈົ້າ ເພື່ອໃຊ້ແທນຄວາມຜິດບາບຂອງ
ພົນລະເມືອງ. 18ເພາະເຫດທີ່ພຣະອົງເອງໄດ້ຊົງທົນທຸກທໍລະມານແລະຖືກທົດລອງ ພຣະອົງຈຶ່ງ
ຊົງສາມາດຊ່ວຍຜູ້ທີ່ກຳລັງຖືກທົດລອງນັ້ນໄດ້.

[ກ]ຫລືວ່າ "ໜ້ອຍໜຶ່ງ."

# ບົດທີ 3

## ພຣະເຢຊູຊົງເປັນໃຫຍ່ກວ່າໂມເຊ

1ເພາະສັນນັ້ນ, ພີ່ນ້ອງຜູ້ບໍລິສຸດແລະຜູ້ເຂົ້າສ່ວນໃນການທີ່ ພຣະເຈົ້າ ຊົງເອີ້ນມາດ້ວຍກັນກັບ
ເຮົາເອີຍ ຈົ່ງຄຶດເຖິງອັກຄະສາວົກແລະມະຫາປະໂລຫິດຂອງພຣະສາດສະໜາທີ່ເຮົາຮັບເຊື່ອນັ້ນ
ຄື ພຣະເຢຊູ. 2ພຣະອົງຊົງສັດຊື່ຕໍ່ ພຣະເຈົ້າຜູ້ຊົງແຕ່ງຕັ້ງພຣະອົງໄວ້ ເໝືອນຢ່າງ ໂມເຊ ໄດ້ສັດຊື່
ຖ້າມກາງຍາດວົງທັງໝົດ ອັນເປັນຄົວເຮືອນຂອງ ພຣະເຈົ້າ. 3ເພາະສົມຄວນຢູ່ແລ້ວທີ່ພຣະອົງນີ້
ມີພຣະກຽດຫລາຍກວ່າ ໂມເຊ ເໝືອນດັ່ງກົກເຄົ້າຍາດວົງມີກຽດຫລາຍກວ່າຍາດວົງ. 4ດ້ວຍວ່າ
ທຸກຍາດວົງກໍມີກົກເຄົ້າ ແຕ່ຜູ້ຊົງເປັນກົກເຄົ້າຂອງສັບພະສິ່ງທັງປວງນັ້ນແມ່ນ ພຣະເຈົ້າ. 5ໃນ
ຍາດວົງທັງໝົດອັນເປັນຄົວເຮືອນຂອງ ພຣະເຈົ້າ ນັ້ນ ໂມເຊ ໄດ້ສັດຊື່ໃນຖານະເປັນຜູ້ຮັບໃຊ້
ເພື່ອເປັນພະຍານໃນເລື່ອງຕ່າງໆ ຊຶ່ງ ພຣະເຈົ້າ ຈະຊົງກ່າວຕໍ່ໄປ. 6ແຕ່ຝ່າຍ ພຣະຄຣິດ ກໍຊົງ
ສັດຊື່ໃນຖານະເປັນ ພຣະບຸດ ຢູ່ເໜືອຍາດວົງ ອັນເປັນຄົວເຮືອນຂອງ ພຣະເຈົ້າ ແລະເຮົາທັງ-
ຫລາຍກໍເປັນຄົວເຮືອນນັ້ນແຫລະ, ຖ້າເຮົາຫາກຍຶດຖືເອົາຄວາມກ້າຫານ ແລະຄວາມພູມໃຈໃນ
ຄວາມຫວັງນັ້ນໄວ້ (ໃຫ້ໝັ້ນຄົງຈົນເຖິງທີ່ສຸດ).

## ຊະບາໂຕທີ່ພັກເຊົາສຳລັບພົນລະເມືອງຂອງພຣະເຈົ້າ

7ເຫດສັນນັ້ນຕາມທີ່ ພຣະວິນຍານ ໄດ້ຊົງກ່າວໄວ້ວ່າ,

"ວັນນີ້, ຖ້າທ່ານທັງຫລາຍໄດ້ຍິນພຣະສຸລະສຽງຂອງພຣະອົງ
8 ຢ່າໃຫ້ໃຈຂອງພວກທ່ານແຂງກະດ້າງໄປ
ເໝືອນຢ່າງໃນຄາວຄັດຄ້ານ ຄືເວລາມີການທົດລອງໃນປ່າ.
9 ທີ່ນັ້ນບັນພະບຸລຸດຂອງພວກທ່ານ
ໄດ້ທົດລອງເຮົາໂດຍໄດ້ເອົາເຮົາເຂົ້າພິສູດ
ເຖິງແມ່ນວ່າເຂົາໄດ້ເຫັນການກະທຳຂອງເຮົາຕະຫລອດສີ່ສິບປີ.
10 ເພາະເຫດນັ້ນເຮົາຈຶ່ງເຄືອງໃຈກັບຄົນສະໄໝນັ້ນ
ແລະເວົ້າວ່າ 'ໃຈຂອງເຂົາມັກຫລົງຜິດຢູ່ສະເໝີ
ເຂົາບໍ່ຮູ້ຈັກຫົນທາງຂອງເຮົາ'.
11 ຕາມທີ່ເຮົາໄດ້ສາບານດ້ວຍຄວາມເຄືອງໃຈວ່າ
'ເຂົາຈະບໍ່ເຂົ້າຮ່ວມບ່ອນພັກເຊົາຂອງເຮົາຈັກເທື່ອ."

12ພີ່ນ້ອງທັງຫລາຍ ຈົ່ງລະວັງໃຫ້ດີ ເພາະຢ້ານວ່າຈະມີຜູ້ໃດຜູ້ໜຶ່ງໃນພວກທ່ານມີໃຈຊົ່ວແລະ
ບໍ່ເຊື່ອ ຄືໃຈປະຖິ້ມ ພຣະເຈົ້າ ຜູ້ຊົງພຣະຊົນຢູ່. 13ແຕ່ຈົ່ງເຕືອນສະຕິກັນແລະກັນທຸກວັນຕະ-
ຫລອດເວລາທີ່ຍັງເອີ້ນໄດ້ວ່າ "ວັນນີ້" ເພື່ອວ່າຈະບໍ່ມີຜູ້ໃດໃນພວກທ່ານມີໃຈແຂງກະດ້າງໄປ
ເພາະກົນອຸບາຍແຫ່ງຄວາມບາບ. 14ເພາະວ່າພວກເຮົາໄດ້ເກີດເປັນຜູ້ມີສ່ວນຮ່ວມກັບ ພຣະຄຣິດ
ຖ້າເຮົາຍຶດຖືເອົາຄວາມໄວ້ວາງໃຈທີ່ເຮົາມີຢູ່ໃນຕອນຕົ້ນນັ້ນໄວ້ໃຫ້ໝັ້ນຄົງຈົນເຖິງທີ່ສຸດ. 15ເມື່ອ
ມີຄຳກ່າວໄວ້ວ່າ, "[ວັນນີ້,] ຖ້າທ່ານທັງຫລາຍໄດ້ຍິນພຣະສຸລະສຽງຂອງພຣະອົງຢ່າໃຫ້ໃຈຂອງ
ພວກທ່ານແຂງກະດ້າງໄປເໝືອນຢ່າງໃນຄາວການຄັດຄ້ານນັ້ນ." 16ແມ່ນໃຜໜໍ ທີ່ໄດ້ຍິນແລ້ວ-

ແຕ່ ຍັງ ໄດ້ ຄັດຄ້ານ ບໍ່ ແມ່ນ ຄົນ ທັງ ປວງ ທີ່ ໂມເຊ ໄດ້ ນຳ ອອກ ມາ ຈາກ ປະເທດ ເອຢິບ ນັ້ນ ຫລື.
17ແລະແມ່ນໃຜທີ່ ທີ່ພຣະອົງໄດ້ຊົງເຄືອງພຣະໄທຕະຫລອດສີ່ສິບປີນັ້ນ ກໍແມ່ນຄົນເຫລົ່ານັ້ນທີ່
ໄດ້ເຮັດບາບ ແລະຊາກສົບຂອງເຂົາໄດ້ຕົກຢູ່ໃນປ່າ ບໍ່ແມ່ນຫລື. 18ແລະແກ່ໃຜທີ່ ທີ່ພຣະອົງ
ໄດ້ຊົງສາບານຕົວວ່າເຂົາຈະບໍ່ໄດ້ເຂົ້າຮ່ວມບ່ອນພັກເຊົາຂອງພຣະອົງຈັກເທື່ອ ກໍແມ່ນຄົນທີ່ບໍ່
ເຊື່ອຟັງເຫລົ່ານັ້ນ ບໍ່ແມ່ນຫລື. 19ດັ່ງນັ້ນພວກເຮົາຈຶ່ງເຫັນວ່າ ເພາະຄວາມບໍ່ເຊື່ອຟັງເຂົາຈຶ່ງເຂົ້າ
ໄປບໍ່ໄດ້.

# ບົດທີ 4

1ເຫດສັນນັ້ນ, ເມື່ອພຣະສັນຍາຍັງມີຢູ່ວ່າ ຈະໃຫ້ພວກເຮົາເຂົ້າຮ່ວມບ່ອນພັກຂອງພຣະອົງ ກໍ
ໃຫ້ເຮົາທັງຫລາຍຢຳເກງ ເພາະຢ້ານຈະມີຜູ້ໜຶ່ງຜູ້ໃດໃນພວກທ່ານໄປບໍ່ເຖິງ. 2ເພາະວ່າພວກ
ເຮົາໄດ້ຍິນຂ່າວປະເສີດຢ່າງດຽວກັນກັບເຂົາ ແຕ່ວ່າເຂົາບໍ່ໄດ້ຮັບປະໂຫຍດຈາກຂ່າວປະເສີດນັ້ນ
ເພາະເຂົາບໍ່ໄດ້ຮັບດ້ວຍຄວາມເຊື່ອ. 3ສຳລັບເຮົາທັງຫລາຍຜູ້ມີຄວາມເຊື່ອແລ້ວ ຈະໄດ້ເຂົ້າຮ່ວມ
ບ່ອນພັກເຊົາຕາມເລື່ອງທີ່ພຣະອົງຊົງກ່າວໄວ້ແລ້ວວ່າ,

“ເຮົາຈຶ່ງສາບານດ້ວຍຄວາມເຄືອງໃຈວ່າ
ເຂົາຈະບໍ່ໄດ້ເຂົ້າຮ່ວມບ່ອນພັກເຊົາຂອງເຮົາຈັກເທື່ອ”

ເຖິງ ແມ່ນວ່າງານ ຂອງພຣະອົງ ຈະ ສຳເລັດ ແລ້ວຕັ້ງແຕ່ສ້າງ ໂລກ. 4ແລະມີບ່ອນໜຶ່ງທີ່ໄດ້ກ່າວ
ເຖິງວັນຖ້ວນເຈັດດັ່ງນີ້ວ່າ, “ໃນວັນຖ້ວນເຈັດນັ້ນ ພຣະເຈົ້າ ໄດ້ຊົງຢຸດພັກການງານທັງສິ້ນຂອງ
ພຣະອົງ”. 5ແລະໃນບ່ອນດຽວກັນນັ້ນມີຄຳວ່າ, “ເຂົາຈະບໍ່ໄດ້ເຂົ້າຮ່ວມບ່ອນພັກເຊົາຂອງເຮົາຈັກ
ເທື່ອ.” 6ທີ່ຈິງ, ຍັງມີລາງຄົນທີ່ຈະເຂົ້າຮ່ວມບ່ອນນັ້ນ ແຕ່ຄົນເຫລົ່ານັ້ນທີ່ໄດ້ຍິນຂ່າວປະເສີດ
ຄາວກ່ອນບໍ່ໄດ້ເຂົ້າເພາະເຂົາບໍ່ເຊື່ອຟັງ.
7ດັ່ງນັ້ນພຣະອົງໄດ້ຊົງກຳນົດໄວ້ອີກວັນໜຶ່ງຄື “ວັນນີ້” ຕາມທີ່ພຣະອົງໄດ້ຊົງກ່າວໄວ້ທາງ
ດາວິດ ໃນເວລາຕໍ່ມາເຖິງນານ ເໝືອນໄດ້ອ້າງມາແລ້ວວ່າ,

“ວັນນີ້, ຖ້າທ່ານທັງຫລາຍໄດ້ຍິນພຣະສຸລະສຽງຂອງພຣະອົງ
ຢ່າໃຫ້ໃຈຂອງພວກທ່ານແຂງກະດ້າງໄປ.”

8ເພາະວ່າຖ້າ ໂຢຊວຍ ໄດ້ພາ ເຂົາ ເຂົ້າ ໄປສູ່ບ່ອນພັກນັ້ນແລ້ວ ພຣະເຈົ້າ ກໍຄົງບໍ່ໄດ້ຊົງກ່າວໃນ
ພາຍຫລັງເຖິງວັນອື່ນອີກ. 9ເຫດສັນນີ້ຍັງມີວັນພັກເຊົາ, ຄືວັນຊະບາໂຕສຳລັບພົນລະເມືອງຂອງ
ພຣະເຈົ້າ. 10ເພາະວ່າຜູ້ໃດທີ່ເຂົ້າຮ່ວມບ່ອນພັກເຊົາຂອງ ພຣະເຈົ້າ ແລ້ວ ກໍໄດ້ພັກການງານຂອງ
ຕົນ ເໝືອນ ພຣະເຈົ້າ ໄດ້ຊົງພັກພຣະລາຊະກິດຂອງພຣະອົງ. 11ເຫດສັນນັ້ນ ເຮົາທັງຫລາຍຈົ່ງ
ອົດສາພະຍາຍາມ ໃຫ້ໄດ້ເຂົ້າສູ່ບ່ອນພັກເຊົານັ້ນ ເພື່ອຈະບໍ່ໃຫ້ຜູ້ໜຶ່ງຜູ້ໃດຫລົງໄປເໝືອນຄົນບໍ່
ເຊື່ອຟັງ ເຫລົ່ານັ້ນ. 12ເພາະວ່າພຣະທຳຂອງ ພຣະເຈົ້າ ປະກອບດ້ວຍຊີວິດ ແລະລິດເດດ, ຄົມ
ກວ່າດາບສອງຄົມທຸກດວງ ແທງຊອດເຖິງຈິດໃຈແລະວິນຍານຕະຫລອດທັງຄໍ່ກະດູກແລະໄຂໃນ
ກະດູກຕິດຕໍ່ກັນ ຈຶ່ງສັງເກດຮູ້ຄວາມຄຶດແລະຄວາມມຸ້ງໝາຍໃນໃຈໄດ້. 13ໃນທຸກສິ່ງທີ່ສ້າງຂຶ້ນ
ນັ້ນບໍ່ມີສິ່ງໃດບັງລັບໄວ້ຈາກພຣະພັກຂອງພຣະອົງ ແຕ່ທຸກສິ່ງໄດ້ປະກົດແຈ້ງຕໍ່ພຣະເນດຂອງ

ພຣະອົງ ຜູ້ທີ່ເຮົາຈະຕ້ອງໃຫ້ການນັ້ນ.

## ພຣະເຢຊູ ຄືພຣະມະຫາປະໂລຫິດຜູ້ໃຫຍ່

[14]ເຫດສັນນັ້ນຄັນພວກເຮົາມີມະຫາປະໂລຫິດຜູ້ໃຫຍ່ທີ່ຜ່ານຟ້າສະຫວັນໄປແລ້ວ ຄື ພຣະເຢຊູ
ພຣະບຸດ ຂອງ ພຣະເຈົ້າ ຂໍໃຫ້ພວກເຮົາຍຶດຖືຄວາມເຊື່ອທີ່ເຮົາໄດ້ປະກາດແລ້ວນັ້ນໃຫ້ໝັ້ນຄົງ.
[15]ເພາະວ່າພວກເຮົາບໍ່ໄດ້ມີມະຫາປະໂລຫິດທີ່ບໍ່ສາມາດຈະເຫັນໃຈໃນຄວາມອ່ອນແອຂອງພວກ
ເຮົາ ແຕ່ມີຕົນໜຶ່ງທີ່ຊົງຖືກທົດລອງເໝືອນຢ່າງເຮົາໃນທຸກປະການ ເຖິງປານນັ້ນພຣະອົງກໍຍັງບໍ່
ມີບາບ. [16]ເຫດສັນນັ້ນໃຫ້ເຮົາທັງຫລາຍມີໃຈກ້າເຂົ້າໄປເຖິງພຣະທີ່ນັ່ງແຫ່ງພຣະຄຸນ ເພື່ອພວກ
ເຮົາຈະໄດ້ຮັບພຣະເມດຕາ ແລະພົບພຣະຄຸນທີ່ຈະຊ່ອຍເຮົາໃນເວລາທີ່ຕ້ອງການ.

# ບົດທີ 5

[1]ຝ່າຍມະຫາປະໂລຫິດທຸກຕົນກໍຖືກເລືອກໄວ້ຈາກມະນຸດ ແລະແຕ່ງຕັ້ງໃຫ້ກະທຳບັນດາກິດ-
ຈະການທີ່ກ່ຽວກັບ ພຣະເຈົ້າ ແທນມະນຸດ ຄືນຳຂອງປະທານ ແລະ ເຄື່ອງບູຊາມາຖວາຍ ເພື່ອລຶ-
ບລ້າງການຜິດບາບ. [2]ທ່ານສະແດງໃຈອົດທົນດົນນານຕໍ່ຄົນໂງ່ແລະຄົນຫລົງຜິດໄດ້ ເພາະທ່ານ
ເອງກໍມີຄວາມອ່ອນແອລ້ອມຢູ່ເໝືອນກັນ. [3]ເພາະເຫດນີ້ທ່ານຈຶ່ງຕ້ອງຖວາຍເຄື່ອງບູຊາເພື່ອລຶ-
ບລ້າງການຜິດບາບ ທັງເພື່ອຕົວເອງແລະເພື່ອພົນລະເມືອງເໝືອນກັນ. [4]ບໍ່ທ່ອນມີຜູ້ໃດຕັ້ງຕົນ
ເອງຢູ່ໃນຕຳແໜ່ງນີ້ມີແຕ່ ພຣະເຈົ້າ ຊົງ ເອີ້ນ ເອົາ ເໝືອນຢ່າງຊົງ ເອີ້ນ ອາໂຣນ ນັ້ນ. [5]ໃນທຳນອງ
ດຽວກັນ ພຣະຄຣິດກໍບໍ່ໄດ້ຊົງຍົກຍໍພຣະອົງເອງຂຶ້ນເປັນມະຫາປະໂລຫິດ ແຕ່ຊົງຮັບພຣະກຽດນີ້
ຈາກ ພຣະເຈົ້າ ຜູ້ຊົງກ່າວກັບພຣະອົງວ່າ, "ທ່ານນັ້ນແຫລະ, ເປັນບຸດຂອງເຮົາຝ່າຍເຮົາ, ເຮົາ
ໃຫ້ກຳເນີດທ່ານໃນວັນນີ້." [6]ເໝືອນດັ່ງພຣະອົງຊົງກ່າວໄວ້ໃນບ່ອນອື່ນວ່າ, "ທ່ານເປັນປະໂລ-
ຫິດຕະຫລອດໄປໃນລຳດັບດຽວກັບ ເມັນຄີເຊເດັກ." [7]ຝ່າຍ ພຣະບຸດ ນັ້ນ, ຂະນະ ເມື່ອຊົງ ເປັນ
ມະນຸດຢູ່ ພຣະອົງໄດ້ຊົງຖວາຍຄຳອ້ອນວອນ ແລະໄຫວ້ວອນດ້ວຍການຮ້ອງໄຫ້ຢ່າງໜັກ ແລະ
ມີນ້ຳພຣະເນດໄຫລ ທູນຕໍ່ ພຣະເຈົ້າ ຜູ້ຊົງສາມາດ ໂຜດໃຫ້ພຣະອົງພົ້ນຈາກຕາຍໄດ້ ແລະຊົງ
ສະດັບຮັບຟັງ ເນື່ອງດ້ວຍຄວາມຢຳເກງຂອງພຣະອົງ. [8]ເຖິງ ແມ່ນວ່າພຣະອົງຊົງ ເປັນ ພຣະບຸດ
ກໍຍັງຊົງຮຽນຮູ້ທີ່ຈະນ້ອມຍອມເຊື່ອຟັງ ໂດຍຄວາມທຸກລຳບາກທີ່ພຣະອົງໄດ້ຊົງທົນນັ້ນ. [9]ເມື່ອ
ພຣະເຈົ້າ ໄດ້ຊົງບັນດານໃຫ້ ພຣະບຸດ ເຖິງທີ່ສຳເລັດແລ້ວ ພຣະບຸດນັ້ນຈຶ່ງໄດ້ເກີດເປັນຕົ້ນກຳ-
ເນີດແຫ່ງຄວາມລອດພົ້ນອັນຕະຫລອດໄປເປັນນິດ ແກ່ຄົນທັງປວງທີ່ເຊື່ອຟັງພຣະອົງ. [10]ໂດຍ
ພຣະເຈົ້າ ໄດ້ຊົງຕັ້ງພຣະອົງໃຫ້ເປັນມະຫາປະໂລຫິດໃນລຳດັບດຽວກັບ ເມັນຄີເຊເດັກ.

## ການຕັກເຕືອນບໍ່ໃຫ້ຖິ້ມພຣະສາດສະໜາ

[11]ກ່ຽວກັບມະຫາປະໂລຫິດນັ້ນມີເລື່ອງເວົ້າຫລາຍ ແລະຍາກທີ່ຈະອະທິບາຍໃຫ້ເຂົ້າໃຈໄດ້
ເພາະວ່າທ່ານທັງຫລາຍກາຍເປັນຄົນຫູໜັກເສຍແລ້ວ. [12]ເຖິງ ແມ່ນວ່າຂະນະນີ້ທ່ານທັງຫລາຍ
ຄວນຈະເປັນຄູໄດ້ແຕ່ດົນແລ້ວກໍດີ ພວກທ່ານກໍຍັງຕ້ອງການໃຫ້ຄົນອື່ນສອນຫລັກທຳເບື້ອງຕົ້ນ
ແຫ່ງພຣະທຳຂອງ ພຣະເຈົ້າ ແກ່ພວກທ່ານອີກ ທ່ານທັງຫລາຍກັບກາຍເປັນຄົນຕ້ອງການນ້ຳ
ນົມ ບໍ່ແມ່ນອາຫານແຂງ. [13]ດ້ວຍວ່າທຸກຄົນທີ່ຍັງກິນນ້ຳນົມຢູ່ນັ້ນ ຍັງບໍ່ຊຳນານໃນເລື່ອງສິນທຳ

ເພາະເຂົາຍັງເປັນເດັກນ້ອຍຢູ່. [14]ອາຫານແຂງເປັນອາຫານສຳລັບຜູ້ແກ່ແລ້ວ ຄືສຳລັບຜູ້ທີ່ໄດ້ຮັບການເຝິກຫັດອົບຮົມໃຫ້ສາມາດສັງເກດວ່າ ສິ່ງໃດດີແລະສິ່ງໃດຊົ່ວ.

## ບົດທີ 6

[1]ເຫດສັນນັ້ນໃຫ້ພວກເຮົາປະຫລັກທຳເບື້ອງຕົ້ນຂອງ ພຣະຄຣິດ ໄວ້ ແລະກ້າວໜ້າໄປສູ່ຄວາມ
ເປັນຜູ້ແກ່ແລ້ວ ຢ່າເອົາສິ່ງເຫລົ່ານີ້ມາວາງເປັນຮາກຖານຊ້ຳອີກ ຄືການກັບໃຈໃໝ່ແລະກິດຈະ-
ການທີ່ນຳໄປສູ່ຄວາມຕາຍ, ຄວາມເຊື່ອໃນ ພຣະເຈົ້າ. [2]ແລະຄຳສອນວ່າດ້ວຍພິທີຊຳລະລ້າງ,
ພິທີວາງມື, ແລະການເປັນຄືນມາຈາກຕາຍ, ກັບການພິພາກສາລົງໂທດເປັນນິດ. [3]ສິ່ງນີ້ແຫລະ,
ພວກເຮົາຈະກະທຳ ຖ້າ ພຣະເຈົ້າ ຊົງໂຜດອະນຸຍາດ. [4]ເພາະວ່າຄົນເຫລົ່ານັ້ນທີ່ໄດ້ຮັບຄວາມ
ສະຫວ່າງມາເທື່ອໜຶ່ງແລ້ວ, ແລະໄດ້ຊີມລົດຂອງປະທານຈາກສະຫວັນ, ໄດ້ກາຍເປັນຜູ້ເຂົ້າ
ສ່ວນໃນ ພຣະວິນຍານບໍລິສຸດ. [5]ແລະໄດ້ຊີມລົດອັນດີແຫ່ງຖ້ອຍຄຳຂອງ ພຣະເຈົ້າ ກັບລິດເດດ
ແຫ່ງຄາວທີ່ຈະມາເຖິງນັ້ນ. [6]ຖ້າເຂົາເຫລົ່ານັ້ນໄດ້ຕົກເສຍໄປແລ້ວ ກໍເຫລືອວິໄສທີ່ຈະນຳເຂົາ
ມາສູ່ການກັບໃຈອີກໄດ້ ເພາະເຂົາເອງຄຶງ ພຣະບຸດ ຂອງ ພຣະເຈົ້າ ເສຍ ແລະເຮັດໃຫ້ພຣະອົງ
ຊົງໄດ້ຮັບການປະຈານຂາຍໜ້າ. [7]ດ້ວຍວ່າພື້ນດິນຕອນໃດດູດຮັບເອົານ້ຳຝົນທີ່ຕົກໃສ່ຢູ່ເລື້ອຍ
ແລະເກີດພືດຜົນງອກຂຶ້ນໃຫ້ປະໂຫຍດແກ່ຄົນປູກຝັງນັ້ນ ກໍຮັບພຣະພອນຈາກ ພຣະເຈົ້າ. [8]ແຕ່
ພື້ນດິນທີ່ເກີດສົ້ງນໜາມກໍນັບວ່າບໍ່ມີຄ່າ ແລະເກືອບຈະຖືກຊົງປ້ອຍດ່າ ແລ້ວໃນທີ່ສຸດກໍຈະຖືກ
ເຜົາໄຟເສຍ.

## ຄວາມແນ່ໃຈໃນຄວາມຫວັງ

[9]ແຕ່ພວກທີ່ຮັກເອີຍ, ເຖິງແມ່ນວ່າເຮົາເວົ້າດັ່ງນັ້ນ ເຮົາກໍຍັງເຊື່ອແນ່ວ່າທ່າທີຂອງພວກທ່ານ
ນັ້ນມີສິ່ງດີກວ່າທີ່ໄດ້ກ່າວມາ ນັ້ນກໍຄືສິ່ງທີ່ກ່ຽວກັບຄວາມພົ້ນ. [10]ເພາະວ່າ ພຣະເຈົ້າ ບໍ່ໄດ້ຊົງອະ
ຍຸດຕິທຳ ຊຶ່ງຈະຊົງລືມການງານທີ່ພວກທ່ານໄດ້ເຮັດ ແລະຄວາມຮັກທີ່ທ່ານໄດ້ສະແດງຕໍ່ພຣະ-
ນາມຂອງພຣະອົງ ຄືການຮັບໃຊ້ໄພ່ພົນຂອງພຣະອົງເໝືອນດັ່ງພວກທ່ານຍັງຮັບໃຊ້ຢູ່. [11]ດ້ວຍ
ວ່າ ເຮົາປາດຖະໜາ ໃຫ້ທ່ານທຸກຄົນສະແດງໃຈຮ້ອນຮົນຢ່າງດຽວກັນຈົນເຖິງທີ່ສຸດ ເພື່ອໃຫ້
ຄວາມຫວັງຂອງພວກທ່ານປະສົບຄວາມສຳເລັດ. [12]ເພື່ອຈະບໍ່ໃຫ້ພວກທ່ານກາຍເປັນຄົນເພີກ-
ເສີຍແຕ່ໃຫ້ຕາມແບບຢ່າງຂອງຄົນເຫລົ່ານັ້ນທີ່ອາໃສຄວາມເຊື່ອແລະຄວາມພຽນ ຈຶ່ງໄດ້ຮັບມໍ-
ລະດົກຕາມພຣະສັນຍາ.

[13]ເມື່ອ ພຣະເຈົ້າ ໄດ້ຊົງສັນຍາໄວ້ກັບ ອັບຣາຮາມ ນັ້ນ ໂດຍເຫດທີ່ບໍ່ມີໃຜເປັນໃຫຍ່ກວ່າພຣະ-
ອົງ ທີ່ພຣະອົງຈະຊົງສາບານດ້ວຍອອກຊື່ຜູ້ນັ້ນໄດ້ ພຣະອົງຈຶ່ງໄດ້ຊົງສາບານດ້ວຍພຣະນາມ
ຂອງພຣະອົງເອງ. [14]ວ່າ, "ຈິງແທ້, ເຮົາຈະອວຍພອນໃຫ້ເຈົ້າ ແລະຈະໃຫ້ເຊື້ອສາຍຂອງເຈົ້າ
ທະວີຫລາຍຂຶ້ນ." [15]ຢ່າງນັ້ນແຫລະ, ເມື່ອ ອັບຣາຮາມ ໄດ້ທົນຄອຍດ້ວຍຄວາມພຽນແລ້ວ ເພິ່ນ
ຈຶ່ງໄດ້ຮັບຕາມພຣະສັນຍານັ້ນ. [16]ດ້ວຍວ່າຝ່າຍມະນຸດເຄີຍສາບານດ້ວຍອອກຊື່ຜູ້ໃຫຍ່ກວ່າຕົນ
ແລະເມື່ອເກີດການຖົກຖຽງກັນຂຶ້ນ ຄຳສາບານນັ້ນກໍເປັນຄຳຢືນຢັນອັນເດັດຂາດ. [17]ສັນນັ້ນເມື່ອ
ພຣະເຈົ້າ ຊົງມີພຣະປະສົງຈະຊົງໃຫ້ຜູ້ທີ່ຈະໄດ້ຮັບມໍລະດົກຕາມພຣະສັນຍານັ້ນ ຮູ້ຄັກແນ່ຕື່ມຂຶ້ນ
ວ່າພຣະປະສົງຂອງພຣະອົງຈະບໍ່ປ່ຽນແປງຈັກເທື່ອ ພຣະອົງຈຶ່ງຊົງຢືນຢັນພຣະສັນຍານັ້ນ ດ້ວຍ

ຄຳສາບານ. [18]ເພື່ອວ່າໂດຍສອງປະການທີ່ປ່ຽນແປງບໍ່ໄດ້ (ໃນສິ່ງນັ້ນ ພຣະເຈົ້າບໍ່ຊົງສາມາດ
ກ່າວມຸສາໄດ້) ເຮົາ, ຜູ້ທີ່ໄດ້ໜີໄພ, ຈຶ່ງຈະໄດ້ຮັບຄວາມຊູໃຈອັນແຮງກ້າໃນການທີ່ຈະຍຶດຖື
ຄວາມຫວັງຊຶ່ງມີຢູ່ຕໍ່ໜ້າເຮົານັ້ນ. [19]ຄວາມຫວັງທີ່ພວກເຮົາຍຶດຖືນັ້ນເປັນສະໝໍທີ່ແທ້ຈິງ ແລະ
ໝັ້ນຄົງຂອງຈິດໃຈ ຄວາມຫວັງນັ້ນນຳໄປສູ່ບ່ອນສັກສິດທີ່ສຸດຢູ່ເບື້ອງຫລັງຜ້າກັ້ງ. [20]ທີ່ພຣະ-
ເຢຊູຜູ້ຊົງນຳໜ້າໄດ້ສະເດັດເຂົ້າໄປກ່ອນແທນພວກເຮົາແລ້ວ ເພາະພຣະອົງໄດ້ຊົງກາຍເປັນມະ-
ຫາປະໂລຫິດຕະຫລອດໄປໃນລຳດັບດຽວກັບ ເມັນຄີເຊເດັກ.

# ບົດທີ 7

## ເລື່ອງເມັນຄີເຊເດັກ

[1]ສ່ວນ ເມັນຄີເຊເດັກ ຜູ້ນີ້ຄືກະສັດເມືອງ ຊາເລັມ ເປັນປະໂລຫິດຂອງ ພຣະເຈົ້າ ຜູ້ສູງສຸດໄດ້
ພົບ ອັບຣາຮາມ ຂະນະທີ່ ອັບຣາຮາມ ກຳລັງກັບມາຈາກການຮົບກັບກະສັດທັງຫລາຍ, ດ້ວຍໄຊ-
ຊະນະ, ແລະໄດ້ຊົງອວຍພອນແກ່ເພິ່ນ. [2]ອັບຣາຮາມ ໄດ້ແບ່ງສິ່ງຂອງທັງໝົດ[ກ] ເປັນສິບສ່ວນ
ເອົາສ່ວນໜຶ່ງຖວາຍແກ່ ເມັນຄີເຊເດັກ ເມັນຄີເຊເດັກ ແປຢ່າງໜຶ່ງວ່າກະສັດແຫ່ງຄວາມຊອບທຳ
ຕາມຄວາມໝາຍແຫ່ງພຣະນາມຂອງທ່ານ ແລະອີກເປັນກະສັດແຫ່ງສັນຕິສຸກ ຕາມຄວາມໝາຍ
ຂອງຊື່ເມືອງ ຊາເລັມ. [3]ບິດາມານດາຫລືເຊື້ອວົງຂອງທ່ານບໍ່ມີກ່າວໄວ້ ວັນຕົ້ນແລະວັນປາຍ
ແຫ່ງຊີວິດຂອງທ່ານກໍບໍ່ມີເໝືອນກັນ ແຕ່ເປັນເໝືອນ ພຣະບຸດ ຂອງ ພຣະເຈົ້າ ຈຶ່ງດຳລົງຢູ່ເປັນ
ປະໂລຫິດສືບໆ ໄປ. [4]ຈົ່ງຄຶດເບິ່ງແມວ່າທ່ານຜູ້ນີ້ໃຫຍ່ພໍພຽງໃດ ທີ່ອັບຣາຮາມ ເປັນຕົ້ນຕະກຸນ
ນັ້ນຍັງໄດ້ແບ່ງຊັບຊະເລີຍອັນດີທີ່ສຸດ ເອົາໜຶ່ງສ່ວນສິບມາຖວາຍແກ່ທ່ານ. [5]ແລະບັນດາເຊື້ອ-
ສາຍຂອງ ເລວີ ຜູ້ຊຶ່ງໄດ້ຮັບຕຳແໜ່ງປະໂລຫິດນັ້ນ ເຖິງແມ່ນວ່າຄົນເຫລົ່ານັ້ນສືບເຊື້ອສາຍມາ
ຈາກ ອັບຣາຮາມ ກໍຍັງມີພຣະບັນຍັດສັ່ງໃຫ້ຮັບໜຶ່ງສ່ວນສິບຈາກພົນລະເມືອງຄືຈາກພວກພີ່ນ້ອງ
ຂອງຕົນ. [6]ແຕ່ ເມັນຄີເຊເດັກຜູ້ນີ້ບໍ່ແມ່ນເຊື້ອສາຍຂອງເຂົາກໍຍັງໄດ້ຮັບໜຶ່ງສ່ວນສິບຈາກອັບຣາ-
ຮາມ ແລະໄດ້ອວຍພອນໃຫ້ອັບຣາຮາມຜູ້ໄດ້ຮັບພຣະສັນຍາຈາກ ພຣະເຈົ້າ. [7]ສິ່ງທີ່ຖຽງບໍ່ໄດ້ກໍ
ຄືຜູ້ນ້ອຍຮັບພອນຈາກຜູ້ໃຫຍ່. [8]ອີກປະການໜຶ່ງ, ໃນກໍລະນີປະໂລຫິດກະກຸນເລວີນັ້ນ ມະນຸດ
ທີ່ຕ້ອງຕາຍກໍເປັນຜູ້ຮັບໜຶ່ງສ່ວນສິບ ແຕ່ໃນກໍລະນີ ເມັນຄີເຊເດັກຜູ້ຮັບໜຶ່ງສ່ວນສິບນັ້ນ ມີຫລັກ
ຖານໃນພຣະຄຳພີວ່າທ່ານຍັງມີຊີວິດຢູ່. [9]ຖ້າຈະເວົ້າອີກຢ່າງໜຶ່ງກໍວ່າ ເລວີຜູ້ຮັບໜຶ່ງສ່ວນສິບນັ້ນ
ກໍຍັງໄດ້ຖວາຍໜຶ່ງສ່ວນສິບແກ່ ເມັນຄີເຊເດັກ ທາງ ອັບຣາຮາມ. [10]ເພາະວ່າໃນຂະນະທີ່ ເມັນຄີ-
ເຊເດັກ ໄດ້ພົບກັບ ອັບຣາຮາມ ເລວີຍັງຢູ່ໃນສາຍເລືອດຂອງບັນພະບຸລຸດຄື ອັບຣາຮາມ.

[11]ດັ່ງນັ້ນ, ຖ້າພວກປະໂລຫິດໄດ້ນຳຜົນທີ່ສຳເລັດແລ້ວ (ດ້ວຍວ່າພົນລະເມືອງໄດ້ຮັບພຣະ-
ບັນຍັດດ້ວຍວິທີນີ້) ເປັນສັນໃດຈຶ່ງຕ້ອງມີປະໂລຫິດອື່ນອີກ ຕາມລຳດັບດຽວກັບ ເມັນຄີເຊເດັກ
ແທນພວກປະໂລຫິດໃນລຳດັບດຽວກັບ ອາໂຣນ. [12]ເພາະເມື່ອຕຳແໜ່ງປະໂລຫິດປ່ຽນແປງແລ້ວ
ພຣະບັນຍັດກໍຈຳເປັນຕ້ອງປ່ຽນແປງໄປເໝືອນກັນ. [13]ເພາະວ່າທ່ານທີ່ເຮົາກ່າວເຖິງນັ້ນກໍມາຈາກ
ຕະກຸນອື່ນ ຄືຕະກຸນທີ່ຍັງບໍ່ມີຜູ້ໃດເຄີຍປະຕິບັດທີ່ແທ່ນບູຊາຈັກເທື່ອ. [14]ເພາະປະກົດແຈ້ງແລ້ວ

[ກ]ຄື ສິ່ງຂອງທັງໝົດທີ່ໄດ້ປຸ້ນເອົາຈາກກະສັດທັງຫລາຍນັ້ນ.

ວ່າ ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍໄດ້ຊົງສືບເຊື້ອສາຍມາຈາກຕະກຸນຢູດາ ແຕ່ເມື່ອ
ໂມເຊໄດ້ກ່າວເຖິງປະໂລຫິດກໍບໍ່ໄດ້ກ່າວເຖິງຕະກຸນນີ້. 15ເລື່ອງນີ້ກໍປະກົດແຈ້ງຂຶ້ນອີກ ຖ້າມີ
ປະໂລຫິດອີກຕົນໜຶ່ງຕາມແບບຢ່າງເມັນຄີເຊເດັກ. 16ຜູ້ຊຶ່ງເປັນປະໂລຫິດທີ່ບໍ່ໄດ້ຮັບການແຕ່ງ-
ຕັ້ງຕາມກົດບັນຍັດຂອງມະນຸດແຕ່ໂດຍລິດເດດແຫ່ງຊີວິດອັນບໍ່ຮູ້ເສື່ອມສູນ. 17ເພາະມີພະຍານ
ກ່າວເຖິງເພິ່ນວ່າ, "ທ່ານເປັນປະໂລຫິດຕະຫລອດໄປເປັນນິດ ໃນລຳດັບດຽວກັບເມັນຄີເຊ-
ເດັກ." 18ດ້ວຍວ່າກົດບັນຍັດທີ່ມີມາກ່ອນນັ້ນໄດ້ຊົງຍົກເລີກເສຍແລ້ວ ເພາະຂາດລິດແລະໄຮ້
ປະໂຫຍດ. 19(ເພາະວ່າພຣະບັນຍັດນັ້ນບໍ່ໄດ້ທຳໃຫ້ສິ່ງໃດເຖິງທີ່ສຳເລັດ) ແຕ່ມີຄວາມຫວັງອັນ
ດີກວ່າໄດ້ເພີ່ມເຕີມເຂົ້າມາ ໂດຍຄວາມຫວັງນັ້ນພວກເຮົາຈຶ່ງຈະເຂົ້າໄປໃກ້ພຣະເຈົ້າໄດ້. 20ການ
ນີ້ໄດ້ບັງເກີດມີມາໂດຍການຊົງສາບານໄວ້ ສ່ວນຄົນອື່ນນັ້ນໄດ້ຖືກແຕ່ງຕັ້ງຂຶ້ນເປັນປະໂລຫິດ
ໂດຍບໍ່ມີຄວາມສາບານ. 21ແຕ່ທ່ານຜູ້ນີ້ຖືກຊົງແຕ່ງຕັ້ງຂຶ້ນໂດຍໄດ້ຮັບຄວາມສາບານວ່າ, "ອົງ
ພຣະຜູ້ເປັນເຈົ້າໄດ້ຊົງສາບານໄວ້ແລ້ວແລະຈະບໍ່ຊົງປ່ຽນພຣະໄທວ່າ 'ທ່ານເປັນປະໂລຫິດຕະ-
ຫລອດໄປ'." 22ດັ່ງນັ້ນພຣະເຢຊູຈຶ່ງຊົງກາຍເປັນຜູ້ຮັບປະກັນຄຳສັນຍາອັນດີກວ່າ. 23ພວກປະ-
ໂລຫິດກະກຸນເລວີນັ້ນສືບຕຳແໜ່ງຕໍ່ກັນມາຫລາຍຄົນ ເພາະຄວາມຕາຍຂັດຂວາງເຂົາບໍ່ໃຫ້ປະ-
ຕິບັດງານຕະຫລອດໄປ. 24ແຕ່ພຣະເຢຊູນີ້ຊົງດຳລົງຕຳແໜ່ງປະໂລຫິດທີ່ບໍ່ສືບຕໍ່ກັນ ເພາະ
ພຣະອົງຊົງດຳລົງຢູ່ເປັນນິດ. 25ດ້ວຍເຫດນີ້ພຣະອົງຈຶ່ງຊົງສາມາດເປັນນິດ ທີ່ຈະໂຜດເອົາຄົນ
ທັງປວງທີ່ໄດ້ເຂົ້າມາຫາພຣະເຈົ້າໂດຍທາງພຣະອົງນັ້ນ ໃຫ້ໄດ້ຮັບຄວາມລອດພົ້ນ ເພາະວ່າ
ພຣະອົງຊົງພຣະຊົນຢູ່ເປັນນິດ ເພື່ອຊ່ອຍທູນຂໍພຣະກະລຸນາໃຫ້ຄົນເຫລົ່ານັ້ນ. 26ມະຫາປະໂລ-
ຫິດຢ່າງນີ້ແຫລະ, ທີ່ເໝາະສົມສຳລັບພວກເຮົາ ຄືເປັນຜູ້ບໍລິສຸດປາສະຈາກຜິດຫລືສິ່ງຊົ່ວມົວ
ໝອງ, ແຍກຈາກຄົນບາບທັງປວງ, ຊົງປະທັບຢູ່ເໜືອມະຫາສະຫວັນ. 27ພຣະອົງບໍ່ຕ້ອງຊົງນຳ
ເຄື່ອງບູຊາມາທຸກໆ ວັນເໝືອນດັ່ງປະໂລຫິດຕົນໃຫຍ່ອື່ນໆ ຜູ້ຊຶ່ງຕອນແຮກຖວາຍສຳລັບການ
ຜິດບາບຂອງຕົນເອງ ແລ້ວຈຶ່ງຖວາຍສຳລັບຄວາມຜິດບາບຂອງພົນລະເມືອງ ສ່ວນພຣະເຢຊູ
ໄດ້ຊົງຖວາຍເຄື່ອງບູຊາພຽງເທື່ອດຽວເປັນການສິ້ນສຸດ ຄືເມື່ອພຣະອົງໄດ້ຊົງນຳພຣະອົງເອງມາ
ຖວາຍ 28ຝ່າຍພຣະບັນຍັດກໍຮັບມະນຸດທີ່ອ່ອນກຳລັງແຕ່ງຕັ້ງໃຫ້ເປັນມະຫາປະໂລຫິດ ແຕ່ຄຳ
ສາບານທີ່ຊົງກ່າວໄວ້ພາຍຫລັງພຣະບັນຍັດນັ້ນ ໄດ້ຊົງແຕ່ງຕັ້ງພຣະບຸດຂຶ້ນ ຜູ້ຊຶ່ງເຖິງຄວາມ
ສຳເລັດເປັນນິດ.

# ບົດທີ 8

## ມະຫາປະໂລຫິດແຫ່ງພຣະສັນຍາໃໝ່

1ເລື່ອງທີ່ເຮົາກຳລັງເວົ້າຢູ່ນີ້ມີຂໍ້ສຳຄັນ ຄືພວກເຮົາມີມະຫາປະໂລຫິດຢ່າງນີ້ ຄືມະຫາປະໂລ-
ຫິດຜູ້ປະທັບຢູ່ເບື້ອງຂວາພຣະທີ່ນັ່ງຂອງຜູ້ຊົງເດຊານຸພາບໃນມະຫາສະຫວັນ. 2ເປັນຜູ້ບົວລະບັດ
ໃນສະຖານທີ່ສັກສິດ ຄືໃນສຳນັກຜ້າອັນແທ້ຈິງ ຊຶ່ງອົງພຣະຜູ້ເປັນເຈົ້າໄດ້ຊົງຕັ້ງໄວ້ ບໍ່ແມ່ນ
ມະນຸດຕັ້ງ. 3ເພາະວ່າມະຫາປະໂລຫິດທຸກຕົນໄດ້ຕັ້ງຂຶ້ນເພື່ອໃຫ້ຖວາຍຂອງທານແລະເຄື່ອງບູ-
ຊາ ດ້ວຍເຫດນີ້ຈຶ່ງຈຳເປັນທີ່ມະຫາປະໂລຫິດຜູ້ນີ້ຈະຕ້ອງມີສິ່ງໜຶ່ງສິ່ງໃດຖວາຍເໝືອນກັນ. 4ຖ້າ

ພຣະອົງຊົງຢູ່ໃນໂລກນີ້ ພຣະອົງກໍຈະບໍ່ຊົງເປັນປະໂລຫິດ ເພາະວ່າມີປະໂລຫິດທີ່ຖວາຍຂອງ
ທານຕາມພຣະບັນຍັດຢູ່ແລ້ວ. 5ປະການໜຶ່ງ, ປະໂລຫິດເຫລົ່ານັ້ນບົວລະບັດເປັນແຕ່ແບບແລະ
ເງົາແຫ່ງສິ່ງສັກສິດໃນສະຫວັນ ເໝືອນໂມເຊ, ເມື່ອທ່ານຈະຕັ້ງສຳນັກຜ້ານັ້ນ ພຣະເຈົ້າໄດ້ຊົງ
ເຕືອນສະຕິທ່ານວ່າ, "ດັ່ງນີ້, ເຈົ້າຕ້ອງເຮັດທຸກສິ່ງຕາມແບບຢ່າງທີ່ເຮົາໄດ້ສະແດງແກ່ເຈົ້າເທິງພູ
ນັ້ນ." 6ແຕ່ພຣະເຢຊູໄດ້ຊົງຮັບພາລະກິດຊຶ່ງປະເສີດກວ່າຂອງປະໂລຫິດເຫລົ່ານັ້ນ ເໝືອນດັ່ງ
ພຣະສັນຍາຊຶ່ງພຣະອົງຊົງເປັນຜູ້ກາງນັ້ນກໍປະເສີດກວ່າພຣະສັນຍາເດີມ ເພາະວ່າໄດ້ຊົງຕັ້ງຂຶ້ນ
ໂດຍພຣະສັນຍາທັງຫລາຍອັນປະເສີດກວ່າເກົ່າ.

7ດ້ວຍວ່າຖ້າພຣະສັນຍາເດີມນັ້ນບໍ່ມີຂໍ້ຕິແລ້ວ ກໍບໍ່ຈຳເປັນຊອກພຣະສັນຍາທີສອງມາແທນ.
8ເພາະວ່າພຣະອົງຊົງກ່າວຕິເຂົາວ່າ,

"ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ,
'ເບິ່ງແມ, ພາຍໜ້າຈະມີຄາວໜຶ່ງ
ທີ່ເຮົາຈະທຳຄຳສັນຍາໃໝ່
ກັບຍາດວົງອິສຣາເອນ ແລະຍາດວົງຢູດາ.
9 ຈະບໍ່ເໝືອນຄຳສັນຍາຊຶ່ງເຮົາໄດ້ສັນຍາໄວ້
ກັບບັນພະບຸລຸດຂອງເຂົາ ໃນເມື່ອເຮົາໄດ້ຈັບມືຂອງເຂົາ
ພາອອກມາຈາກປະເທດເອຢິບ'
ເພາະອົງພຣະຜູ້ເປັນເຈົ້າຊົງກ່າວວ່າ
'ເຂົາເຫລົ່ານັ້ນບໍ່ໄດ້ຕັ້ງຢູ່ໃນຄຳສັນຍາຂອງເຮົາ
ຝ່າຍເຮົາຈຶ່ງເພີດເສີຍຕໍ່ເຂົາ'.
10 ອົງພຣະຜູ້ເປັນເຈົ້າຊົງກ່າວອີກວ່າ
'ນີ້ແມ່ນຄຳສັນຍາ
ທີ່ເຮົາຈະສັນຍາໄວ້ກັບຍາດວົງອິສຣາເອນ
ພາຍຫລັງສະໄໝນັ້ນ
ຄືເຮົາຈະບັນຈຸຂໍ້ບັນຍັດຂອງເຮົາໄວ້ໃນໃຈຂອງເຂົາ
ເຮົາຈະຈາລຶກຂໍ້ບັນຍັດນັ້ນໄວ້ໃນຫົວໃຈຂອງເຂົາ
ເຮົາຈະເປັນພຣະເຈົ້າຂອງເຂົາ
ແລະຝ່າຍເຂົາຈະເປັນພົນລະເມືອງຂອງເຮົາ.
11 ເຂົາຈະບໍ່ສອນເພື່ອນບ້ານແລະພີ່ນ້ອງຂອງຕົນແຕ່ລະຄົນວ່າ,
"ຈົ່ງຮູ້ຈັກອົງພຣະຜູ້ເປັນເຈົ້າ" ເພາະເຂົາທຸກຄົນຈະຮູ້ຈັກເຮົາ
ຕັ້ງແຕ່ຜູ້ນ້ອຍທີ່ສຸດຈົນເຖິງຜູ້ໃຫຍ່ທີ່ສຸດ.
12 ເພາະເຮົາຈະກະລຸນາຕໍ່ການອະທຳຂອງເຂົາ
ແລະການຜິດບາບຂອງເຂົາ ເຮົາຈະບໍ່ຈົດຈຳຕໍ່ໄປ'."

13ເມື່ອພຣະອົງຊົງກ່າວວ່າ "ຄຳສັນຍາໃໝ່" ກໍເປັນທີ່ເຮັດໃຫ້ຄຳສັນຍາເດີມນັ້ນພົ້ນສະໄໝໄປ

ແລ້ວ ສິ່ງທີ່ພົ້ນສະໄໝແລະເກົ່າໄປແລ້ວນັ້ນກໍຈວນຈະເສື່ອມສູນໄປ.

# ບົດທີ 9

## ສະຖານອັນສັກສິດທີ່ແຜ່ນດິນໂລກແລະທີ່ຟ້າສະຫວັນ

1ເຖິງແມ່ນຄຳສັນຍາເດີມນັ້ນກໍມີກົດໃນການນະມັດສະການ ແລະມີສະຖານອັນສັກສິດທີ່
ແຜ່ນດິນໂລກ. 2ດ້ວຍວ່າມີສຳນັກຜ້າທີ່ຈັດຕັ້ງຂຶ້ນແລ້ວ ຄືຫ້ອງຊັ້ນນອກຊຶ່ງມີເຄື່ອງຮອງຕີນ
ໂຄມ, ມີໂຕະ, ແລະມີເຂົ້າຈີ່ທີ່ຕັ້ງຖວາຍໄວ້ ຫ້ອງທຳອິດນີ້ເອີ້ນວ່າສະຖານທີ່ສັກສິດ. 3ພາຍໃນ
ຜ້າກັ້ງຊັ້ນທີສອງມີຫ້ອງຊຶ່ງເອີ້ນວ່າສະຖານທີ່ສັກສິດທີ່ສຸດ. 4ໃນຫ້ອງນັ້ນມີແທ່ນຄຳສຳລັບເຜົາ
ເຄື່ອງຫອມ, ມີຫີບຫຸ້ມຫໍ່ດ້ວຍຄຳທຸກດ້ານສຳລັບໃສ່ຄຳສັນຍາ ຢູ່ໃນຫີບນັ້ນມີຂັນຄຳໃສ່ມານາ
ໄວ້, ມີໄມ້ເທົ້າຂອງອາໂຣນທີ່ປົ່ງຍອດ, ແລະມີແຜ່ນຫີນຈາລຶກຄຳສັນຍາແລ້ວ. 5ຢູ່ເທິງຫີບນັ້ນມີ
ຮູບເຄຣຸບປະກອບດ້ວຍສະຫງ່າລາສີອັນຮຸ່ງເຮືອງຂອງພຣະເຈົ້າ ປົກຄຸມພຣະທີ່ນັ່ງອັນຊົງພຣະ-
ກະລຸນານັ້ນ ສິ່ງເຫລົ່ານີ້ເຮົາຈະພັນລະນາໃຫ້ລະອຽດໃນທີ່ນີ້ບໍ່ໄດ້. 6ເມື່ອຈັດຕັ້ງສິ່ງເຫລົ່ານີ້ໄວ້
ຢ່າງນັ້ນແລ້ວ ພວກປະໂລຫິດກໍເຂົ້າໄປປະກອບພິທີທຸກເວລາໃນຫ້ອງຊັ້ນນອກນັ້ນ. 7ແຕ່ໃນ
ຫ້ອງທີສອງນັ້ນມີມະຫາປະໂລຫິດຜູ້ດຽວເທົ່ານັ້ນ ເຂົ້າໄປໄດ້ປີລະເທື່ອ ແຕ່ຕ້ອງນຳເລືອດເຂົ້າ
ໄປຖວາຍເພື່ອຕົນເອງ ແລະເພື່ອຄວາມຜິດໂດຍບໍ່ເຈດຕະນາຂອງພົນລະເມືອງ. 8ຢ່າງນັ້ນ
ພຣະວິນຍານບໍລິສຸດຈຶ່ງຊົງສະແດງວ່າ ທາງທີ່ຈະເຂົ້າໄປໃນສະຖານທີ່ສັກສິດທີ່ສຸດນັ້ນ ຍັງບໍ່
ໄດ້ປະກົດໃຫ້ເຫັນໃນເມື່ອຫ້ອງຕົ້ນນັ້ນຍັງຕັ້ງຢູ່. 9ຫ້ອງຊັ້ນນອກນັ້ນເປັນເຄື່ອງໝາຍເຖິງສະໄໝ
ປັດຈຸບັນ ຄືໝາຍຄວາມວ່າການຖວາຍຂອງທານແລະເຄື່ອງບູຊາຕາມແບບນີ້ ຈະຊຳລະໃຈສຳ-
ນຶກຜິດແລະຊອບຂອງຜູ້ຖວາຍນັ້ນບໍ່ໄດ້. 10ເພາະເປັນເລື່ອງຂອງກິນຂອງດື່ມແລະພິທີຊຳລະ
ລ້າງຕ່າງໆ ເທົ່ານັ້ນ ເປັນພິທີສຳລັບການປະຕິບັດທາງກາຍ ທີ່ໄດ້ຊົງບັນຍັດໄວ້ຈົນກວ່າຈະໄດ້
ຊົງປ່ຽນແປງໃໝ່.

11ສ່ວນພຣະຄຣິດ, ໄດ້ສະເດັດມາເປັນມະຫາປະໂລຫິດສຳລັບສິ່ງປະເສີດຊຶ່ງມາເຖິງແລ້ວ[ກ]
ພຣະອົງກໍໄດ້ສະເດັດເຂົ້າໄປໃນສຳນັກອັນໃຫຍ່ແລະປະເສີດກວ່າແຕ່ກ່ອນ (ທີ່ບໍ່ໄດ້ສ້າງຂຶ້ນ
ດ້ວຍມືມະນຸດ ຄືບໍ່ແມ່ນສິ່ງຂອງທີ່ສ້າງຂຶ້ນໃນໂລກນີ້). 12ພຣະອົງໄດ້ສະເດັດເຂົ້າໄປໃນສະ-
ຖານທີ່ສັກສິດທີ່ສຸດພຽງເທື່ອດຽວເປັນການສິ້ນສຸດ ແລະພຣະອົງບໍ່ໄດ້ຊົງນຳເລືອດແບ້ຫລືເລືອດ
ລູກງົວເຂົ້າໄປ ແຕ່ຊົງນຳພຣະໂລຫິດຂອງພຣະອົງເອງເຂົ້າໄປ ແລະຊົງສຳເລັດການໄຖ່ບາບອັນ
ຕະຫລອດໄປ. 13ເພາະວ່າຖ້າເລືອດແບ້ຫລືເລືອດງົວເຖິກ ແລະຂີ້ເຖົ່າໄຟຂອງລູກງົວໂຕແມ່ທີ່
ໂຮຍລົງເທິງຄົນຊົ່ວມົວໝອງ ຍັງອາດຊຳລະຮ່າງກາຍໃຫ້ສະອາດໄດ້. 14ຫລາຍກວ່ານັ້ນຈັກພຽງ
ໃດ ພຣະໂລຫິດຂອງພຣະຄຣິດ ຜູ້ໄດ້ຊົງຖວາຍພຣະອົງເອງແດ່ພຣະເຈົ້າໂດຍພຣະວິນຍານຜູ້
ຊົງຕັ້ງຢູ່ເປັນນິດ ເປັນເຄື່ອງບູຊາປາສະຈາກຕຳໜິ ກໍຈະຊົງຊຳລະໃຈສຳນຶກຜິດແລະຊອບຂອງ
ເຮົາທັງຫລາຍ ໃຫ້ພົ້ນຈາກກິດຈະການທີ່ນຳໄປສູ່ຄວາມຕາຍ ເພື່ອຫັນໄປຮັບໃຊ້ພຣະເຈົ້າຜູ້ຊົງ
ພຣະຊົນຢູ່.

[ກ]ສຳເນົາຕົ້ນສະບັບບາງສະບັບວ່າ “ຊຶ່ງຈະມາເຖິງ.”

[15]ເພາະເຫດນັ້ນພຣະອົງຈຶ່ງຊົງເປັນຜູ້ກາງແຫ່ງຄຳສັນຍາໃໝ່ ເພື່ອໃຫ້ຄົນທັງຫລາຍທີ່ພຣະ-
ອົງຊົງເອີ້ນມາ ໄດ້ຮັບມໍລະດົກຕະຫລອດໄປຕາມທີ່ຊົງສັນຍາໄວ້ ເພາະຄວາມຕາຍນັ້ນໄຖ່ເຂົາ
ໃຫ້ພົ້ນຈາກຜິດບາບທີ່ເກີດໃຕ້ຄຳສັນຍາເດີມ. [16]ເພາະວ່າໃນກໍລະນີທີ່ກ່ຽວກັບໜັງສືພິໄນກຳ ກໍ
ຈະຕ້ອງພິສູດວ່າຜູ້ເຮັດໜັງສືນັ້ນຕາຍແລ້ວຄົນນັ້ນຕ້ອງຕາຍເສຍກ່ອນ ໜັງສືພິໄນກຳຈຶ່ງຈະໃຊ້
ໄດ້. [17]ເພາະຖ້າຜູ້ທີ່ເຮັດໜັງສືນັ້ນຍັງມີຊີວິດຢູ່ ໜັງສືພິໄນກຳນັ້ນກໍໃຊ້ບໍ່ໄດ້. [18]ເພາະເຫດນັ້ນ,
ເຖິງແມ່ນຄຳສັນຍາເດີມກໍບໍ່ໄດ້ຊົງຕັ້ງຂຶ້ນໂດຍປາສະຈາກເລືອດ. [19]ເພາະວ່າເມື່ອໂມເຊໄດ້ປະ-
ກາດຄຳສັ່ງທຸກຂໍ້ຕາມພຣະບັນຍັດແກ່ບັນດາພົນລະເມືອງແລ້ວ ທ່ານກໍເອົາເລືອດລູກງົວ (ແລະ
ເລືອດແບ້) ກັບນ້ຳ ແລ້ວເອົາຂົນແກະສີແດງແລະຕົ້ນຫູສົບ ມາຈຸ່ມຊິດໃສ່ໜັງສືມ້ວນນັ້ນກັບທັງ
ພົນລະເມືອງທັງປວງ. [20]ໂດຍກ່າວວ່າ, “ນີ້ແຫລະ, ຄືເລືອດທີ່ກ່ຽວກັບພຣະສັນຍາຊຶ່ງພຣະເຈົ້າ
ຊົງບັນຍັດໄວ້ແກ່ເຈົ້າທັງຫລາຍ.” [21]ໃນທຳນອງດຽວກັນນັ້ນ ທ່ານກໍໄດ້ເອົາເລືອດຊິດໃສ່ສຳນັກ
ຜ້າ ກັບເຄື່ອງໃຊ້ໃນພິທີນະມັດສະການທຸກຊະນິດເໝືອນກັນ. [22]ແລ້ວຕາມພຣະບັນຍັດນັ້ນ
ເກືອບທຸກສິ່ງຕ້ອງຊຳລະດ້ວຍເລືອດ ແລະຖ້າບໍ່ມີເລືອດໄຫລອອກແລ້ວການໃຫ້ອະໄພກໍບໍ່ມີ.

## ພຣະເຢຊູຊົງລົບລ້າງບາບໂດຍການຖວາຍຕົນເອງ

[23]ເຫດສັນນີ້ສິ່ງຂອງໃນໂລກນີ້ ທີ່ມີແບບຕົວຢ່າງໃນສະຫວັນ ຈຳເປັນຕ້ອງຊຳລະໂດຍໃຊ້
ເຄື່ອງບູຊາອັນປະເສີດກວ່າອີກ. [24]ເພາະວ່າພຣະຄຣິດບໍ່ໄດ້ສະເດັດເຂົ້າໄປໃນສະຖານທີ່ສັກສິດ
ຊຶ່ງສ້າງຂຶ້ນດ້ວຍມືມະນຸດຕາມແບບຢ່າງໃນສະຫວັນ ແຕ່ດຽວນີ້ພຣະອົງໄດ້ສະເດັດເຂົ້າໃນມະ-
ຫາສະຫວັນ ເພື່ອເຂົ້າເຝົ້າພຣະເຈົ້າແທນເຮົາທັງຫລາຍ. [25]ພຣະອົງບໍ່ຕ້ອງຊົງຖວາຍພຣະອົງ
ເອງເລື້ອຍໆ ບໍ່ເໝືອນມະຫາປະໂລຫິດທີ່ເຂົ້າໃນສະຖານທີ່ສັກສິດທຸກປີ ແລະນຳເລືອດຊຶ່ງບໍ່
ແມ່ນເລືອດຂອງຕົນເອງເຂົ້າໄປຖວາຍ. [26]ເພາະຖ້າເປັນຢ່າງນັ້ນ, ພຣະອົງຄົງຈະຕ້ອງຊົງທົນ
ທຸກທໍລະມານເປັນຫລາຍເທື່ອນັບຕັ້ງແຕ່ສ້າງໂລກມາ ແຕ່ໃນຄາວທີ່ສຸດນີ້ພຣະອົງໄດ້ປະກົດ
ເພື່ອຖວາຍພຣະອົງເອງເປັນເຄື່ອງບູຊາພຽງເທື່ອດຽວ ເພື່ອລົບລ້າງບາບເປັນການສິ້ນສຸດ.
[27]ມະນຸດຖືກຊົງກຳນົດໄວ້ແລ້ວວ່າຈະຕ້ອງຕາຍເທື່ອດຽວ ແລະຫລັງຈາກນັ້ນຈະມີການຊົງພິ-
ພາກສາສັນໃດ. [28]ພຣະຄຣິດກໍສັນນັ້ນ ຄືພຣະອົງຊົງຖວາຍພຣະອົງເອງເປັນເຄື່ອງບູຊາເທື່ອ
ດຽວ ເພື່ອແບກບາບຂອງຄົນຈຳນວນຫລາຍໄວ້ ພຣະອົງຈະຊົງປະກົດເປັນເທື່ອທີສອງ ໂດຍບໍ່
ກ່ຽວກັບບາບ ແຕ່ເພື່ອໂຜດບັນດາຜູ້ທີ່ລໍຄອຍພຣະອົງດ້ວຍໃຈຮ້ອນຮົນ ໃຫ້ໄດ້ຮັບຄວາມພົ້ນ.

# ບົດທີ 10

[1]ດ້ວຍວ່າພຣະບັນຍັດເປັນພຽງແຕ່ເງົາຂອງສິ່ງປະເສີດທີ່ຈະມາພາຍໜ້ານັ້ນ ແລະບໍ່ແມ່ນຕົວ
ຈິງຂອງສິ່ງເຫລົ່ານັ້ນ ເຄື່ອງບູຊາທີ່ເຂົາຖວາຍທຸກປີສະເໝີມາຕາມພຣະບັນຍັດ ກໍບໍ່ອາດຈະເຮັດ
ໃຫ້ຜູ້ທີ່ເຂົ້າເຝົ້ານັ້ນເຖິງທີ່ສຳເລັດໄດ້ຈັກເທື່ອ. [2]ເພາະຖ້າເປັນຢ່າງນັ້ນໄດ້ ເຂົາຄົງໄດ້ຢຸດການ
ຖວາຍເຄື່ອງບູຊາແລ້ວ ບໍ່ແມ່ນຫລື ຖ້າຜູ້ນະມັດສະການນັ້ນໄດ້ຮັບການຊຳລະລ້າງເທື່ອດຽວເປັນ
ການສິ້ນສຸດແລ້ວ ຄົນເຫລົ່ານັ້ນຄົງຈະບໍ່ຮູ້ສຶກວ່າມີບາບອີກຕໍ່ໄປ. [3]ແຕ່ການຖວາຍເຄື່ອງບູຊານັ້ນ
ເປັນການເຕືອນໃຫ້ລະນຶກເຖິງບາບທຸກປີ. [4]ເຫດວ່າເລືອດງົວເຖິກແລະເລືອດແບ້ບໍ່ສາມາດຊຳ-

ລະບາບໃຫ້ໝົດສິ້ນໄປໄດ້ຈັກເທື່ອ. [5]ດັ່ງນັ້ນ, ເມື່ອພຣະຄຣິດສະເດັດເຂົ້າມາໃນໂລກ ພຣະອົງ
ຊົງທູນວ່າ,

"ເຄື່ອງບູຊາແລະຂອງທານ ພຣະອົງເຈົ້າບໍ່ຊົງປະສົງ
ແຕ່ພຣະອົງໄດ້ຈັດຕຽມຮ່າງກາຍສຳລັບຂ້າພຣະອົງ.
[6] ເຄື່ອງເຜົາບູຊາແລະເຄື່ອງບູຊາລົບລ້າງບາບນັ້ນ
ພຣະອົງເຈົ້າບໍ່ຊົງພໍພຣະໄທ.
[7] ເມື່ອນັ້ນຂ້າພຣະອົງຈຶ່ງທູນວ່າ 'ຂ້າແດ່ພຣະເຈົ້າ,
ຂ້າພຣະອົງໄດ້ມາເພື່ອຈະເຮັດຕາມນ້ຳພຣະໄທຂອງພຣະອົງ
ຕາມທີ່ມີເລື່ອງຂອງຂ້າພຣະອົງຂຽນໄວ້ໃນໜັງສືມ້ວນນັ້ນ."

[8]ເມື່ອພຣະອົງຊົງກ່າວແລ້ວວ່າ "ເຄື່ອງບູຊາແລະຂອງທານ" ກັບ "ເຄື່ອງເຜົາບູຊາແລະເຄື່ອງ
ບູຊາລົບລ້າງບາບ ທີ່ເຂົາໄດ້ບູຊາຕາມພຣະບັນຍັດນັ້ນ ພຣະອົງເຈົ້າບໍ່ຊົງປະສົງແລະບໍ່ຊົງພໍ-
ພຣະໄທ." [9]ຕໍ່ນັ້ນມາພຣະອົງຊົງກ່າວວ່າ, "ຂ້າແດ່ພຣະເຈົ້າ, ຂ້າພຣະອົງໄດ້ມາເພື່ອຈະເຮັດ
ຕາມນ້ຳພຣະໄທຂອງພຣະອົງ" ພຣະອົງຊົງເລີກລະບົບເດີມນັ້ນເສຍ ເພື່ອຈະຊົງຕັ້ງລະບົບທີ
ສອງໄວ້. [10]ແລະໂດຍນ້ຳພຣະໄທນັ້ນແຫລະ, ທີ່ເຮົາທັງຫລາຍໄດ້ຮັບການຊົງຊຳລະໃຫ້ບໍລິສຸດ
ດ້ວຍການຖວາຍພຣະກາຍຂອງພຣະເຢຊູຄຣິດເທື່ອດຽວເທົ່ານັ້ນ ເປັນການສິ້ນສຸດ. [11]ຝ່າຍປະ-
ໂລຫິດທຸກຕົນກໍຢືນບົວລະບັດຢູ່ທຸກວັນ ໂດຍການນຳເຄື່ອງບູຊາຢ່າງດຽວກັນມາຖວາຍເລື້ອຍໆ
ເຄື່ອງບູຊານັ້ນບໍ່ສາມາດຊຳລະລ້າງບາບໄດ້ຈັກເທື່ອ. [12]ແຕ່ເມື່ອປະໂລຫິດຕົນນີ້ໄດ້ຖວາຍເຄື່ອງ
ບູຊາອັນດຽວ ເປັນເຄື່ອງບູຊາລົບລ້າງບາບໄດ້ຕະຫລອດໄປ "ພຣະອົງກໍສະເດັດປະທັບເບື້ອງ
ຂວາຂອງພຣະເຈົ້າ." [13]ເພື່ອຊົງຄອຍຢູ່ "ຈົນບັນດາສັດຕູຂອງພຣະອົງຖືກປາບລົງໃຕ້ພຣະບາດ
ຂອງພຣະອົງ." [14]ເພາະວ່າດ້ວຍເຄື່ອງບູຊາອັນດຽວ ພຣະອົງໄດ້ຊົງໂຜດຄົນທັງຫລາຍທີ່ຊົງຊຳ-
ລະເປັນບໍລິສຸດນັ້ນໃຫ້ເຖິງທີ່ສຳເລັດເປັນນິດ.

[15]ແລະພຣະວິນຍານບໍລິສຸດຊົງເປັນພະຍານໃຫ້ແກ່ພວກເຮົາເໝືອນກັນ ເພາະວ່າພຣະອົງໄດ້
ຊົງກ່າວໄວ້ແລ້ວວ່າ,

[16] "ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ:
ນີ້ແມ່ນຄຳສັນຍາທີ່ເຮົາຈະສັນຍາໄວ້ກັບເຂົາພາຍຫລັງສະໄໝນັ້ນ
ຄືເຮົາຈະບັນຈຸຂໍ້ບັນຍັດຂອງເຮົາໄວ້ໃນຈິດໃຈຂອງເຂົາ
ເຮົາຈະຈາລຶກຂໍ້ບັນຍັດນັ້ນໄວ້ໃນຫົວໃຈຂອງເຂົາ."

[17]ແລ້ວຊົງກ່າວຕໍ່ໄປວ່າ

"ແລະການຜິດບາບກັບການອະທຳຂອງເຂົາເຮົາຈະບໍ່ຈົດຈຳຕໍ່ໄປອີກຈັກເທື່ອ."

[18]ເພາະວ່າເມື່ອມີການໃຫ້ອະໄພແລ້ວ ກໍບໍ່ມີເຄື່ອງບູຊາລົບລ້າງບາບຕໍ່ໄປ.

## ໃຫ້ພວກເຮົາເຂົ້າມາໃກ້ຍຶດໝັ້ນໃນຄວາມຫວັງ

[19]ດັ່ງນັ້ນພີ່ນ້ອງທັງຫລາຍເອີຍ, ເຮົາທັງຫລາຍມີໃຈກ້າຈະເຂົ້າໄປໃນສະຖານສັກສິດທີ່ສຸດ

ດ້ວຍຄວາມຕາຍ[ກ] ຂອງ **ພຣະເຢຊູ**. 20ຕາມທາງໃໝ່ຊຶ່ງມີຊີວິດ ທີ່ພຣະອົງໄດ້ຊົງໄຂອອກໃຫ້
ພວກເຮົາ ຜ່ານເຂົ້າໄປທາງຜ້າກັ້ງນັ້ນ ຄືທາງພຣະກາຍຂອງພຣະອົງ. 21ອີກປະການໜຶ່ງ,
ພວກເຮົາມີປະໂລຫິດຕົນໃຫຍ່ເໜືອຄົວເຮືອນຂອງ **ພຣະເຈົ້າ** ແລ້ວ. 22ໂດຍເຫດນີ້, ຈົ່ງໃຫ້ພວກ
ເຮົາເຂົ້າໄປໃກ້ດ້ວຍຈິງໃຈ, ດ້ວຍຄວາມເຊື່ອອັນເຕັມບໍລິບູນ, ມີໃຈທີ່ໄດ້ຮັບການຊົງຊຳລະຈາກ
ການຮູ້ສຶກຕົວວ່າມີບາບ, ແລະມີຮ່າງກາຍທີ່ຊຳລະລ້າງດ້ວຍນ້ຳບໍລິສຸດ. 23ຈົ່ງຍຶດໝັ້ນໃນຄວາມ
ຫວັງທີ່ພວກເຮົາປະກາດຕົວວ່າໄດ້ຮັບໄວ້ແລ້ວນັ້ນ ຢ່າໃຫ້ເຄື່ອນໄຫວ ເພາະວ່າພຣະອົງຜູ້ຊົງ
ປະທານພຣະສັນຍານັ້ນກໍຊົງສັດຊື່. 24ຈົ່ງຄ່ອຍພິລະນາເບິ່ງເຊິ່ງກັນແລະກັນ ເພື່ອປຸກໃຈເຊິ່ງກັນ
ແລະກັນໃຫ້ມີຄວາມຮັກແລະເຮັດການດີງາມ. 25ຢ່າປະການປະຊຸມກັນເໝືອນຢ່າງລາງຄົນເຄີຍ
ປະນັ້ນ ແຕ່ຈົ່ງໜຸນໃຈກັນຫລາຍກວ່າເກົ່າອີກ ເພາະທ່ານກໍຮູ້ກໍເຫັນຢູ່ວ່າວັນນັ້ນໃກ້ເຂົ້າມາແລ້ວ.

26ດ້ວຍວ່າຖ້າພວກເຮົາໄດ້ຮັບຄວາມຮູ້ເລື່ອງຄວາມຈິງແລ້ວ ແຕ່ຍັງເຈດຕະນາເຮັດບາບຢູ່
ເຄື່ອງບູຊາລຶບລ້າງບາບກໍຈະບໍ່ມີເຫລືອຢູ່ຕໍ່ໄປ. 27ເຫລືອແຕ່ຄວາມຢ້ານອັນພິລຶກໃນການລໍຖ້າ
ການພິພາກສາລົງໂທດ ແລະໄຟອັນຮ້າຍແຮງທີ່ຈະເຜົາຜານບັນດາຄົນທີ່ຕໍ່ສູ້ **ພຣະເຈົ້າ**. 28ຄົນທີ່
ລະເມີດບັນຍັດຂອງໂມເຊນັ້ນ ຖ້າມີພະຍານສອງຫລືສາມປາກ ກໍຈະຕ້ອງຕາຍໂດຍບໍ່ມີຄວາມ
ເມດຕາ. 29ທ່ານທັງຫລາຍຈົ່ງຄຶດເບິ່ງວ່າ ຄົນທີ່ຢຽບຢ່ຳ **ພຣະບຸດ** ຂອງ **ພຣະເຈົ້າ**, ແລະຖືພຣະ-
ໂລຫິດອັນກ່ຽວກັບພຣະສັນຍາ ຊຶ່ງຊຳລະຕົວໃຫ້ບໍລິສຸດວ່າເປັນສິ່ງຊົ່ວຊ້າ, ກັບທັງປະໝາດ
**ພຣະວິນຍານ** ຜູ້ຊົງພຣະຄຸນນັ້ນ ຄວນຈະຖືກລົງໂທດຫລາຍກວ່າຄົນເຫລົ່ານັ້ນຈັກເທົ່າໃດ.
30ເພາະພວກເຮົາໄດ້ຮູ້ຈັກພຣະອົງຜູ້ຊົງກ່າວວ່າ, "ການແກ້ແຄ້ນເປັນທຸລະຂອງເຮົາ ຝ່າຍເຮົາຈະ
ຕອບແທນ" ແລະໄດ້ຊົງກ່າວອີກວ່າ, "ອົງ **ພຣະຜູ້ເປັນເຈົ້າ** ຈະຊົງພິພາກສາພົນລະເມືອງຂອງ
ພຣະອົງ." 31ການຕົກຢູ່ໃນເງື້ອມພຣະຫັດຂອງ **ພຣະເຈົ້າ** ຜູ້ຊົງພຣະຊົນຢູ່ນັ້ນ ກໍເປັນການພິລຶກ-
ເພິງກົວ.

32ແຕ່ທ່ານທັງຫລາຍຈົ່ງລະນຶກເຖິງຄາວກ່ອນນັ້ນ ຫລັງຈາກທີ່ທ່ານໄດ້ຮັບຄວາມສະຫວ່າງ
ແລ້ວ ພວກທ່ານໄດ້ສູ້ທົນຕໍ່ຄວາມຍາກລຳບາກອັນໃຫຍ່ຫລວງ. 33ລາງເທື່ອພວກທ່ານກໍຖືກ
ການປະຈານອັບອາຍຂາຍໜ້າ ແລະຖືກຂົ່ມເຫງໃຫ້ປະຊາຊົນຊົມ ລາງເທື່ອພວກທ່ານກໍເຂົ້າ
ຮ່ວມທຸກກັບຄົນທີ່ຖືກການຢ່າງດຽວກັນນັ້ນ. 34ເພາະວ່າທ່ານທັງຫລາຍມີໃຈເມດຕາຕໍ່ຄົນເຫລົ່າ-
ນັ້ນທີ່ຖືກຜູກມັດ ແລະເມື່ອມີຄົນປຸ້ນເອົາຊັບສິ່ງຂອງໆ ພວກທ່ານໄປ ພວກທ່ານກໍຍອມໃຫ້ເຂົາ
ດ້ວຍໃຈຍິນດີ ເພາະພວກທ່ານຮູ້ແລ້ວວ່າ ພວກທ່ານເອງມີຊັບສົມບັດດີກວ່າ ແລະຖາວອນກວ່າ
ນັ້ນອີກ. 35ເຫດສັນນັ້ນຢ່າໄດ້ປະຖິ້ມຄວາມໄວ້ວາງໃຈຂອງພວກທ່ານທີ່ຈະມີລາງວັນອັນໃຫຍ່
ນັ້ນ. 36ທ່ານທັງຫລາຍຈຳເປັນຕ້ອງມີຄວາມອົດທົນ ເພື່ອວ່າ, ເມື່ອໄດ້ເຮັດຕາມນ້ຳພຣະໄທຂອງ
**ພຣະເຈົ້າ** ແລ້ວ ກໍຈະໄດ້ຮັບຕາມທີ່ຊົງສັນຍາໄວ້. 37"ອີກບໍ່ເຫິງ, ບໍ່ເຫິງເທົ່າໃດພຣະອົງຜູ້ຈະສະ-
ເດັດມາກໍຈະສະເດັດມາແລະຈະບໍ່ຊົງຊັກຊ້າ. 38ແຕ່ຄົນຊອບທຳຂອງເຮົາຈະມີຊີວິດຢູ່ດ້ວຍ
ຄວາມເຊື່ອຖ້າເຂົາຫາກຫລົບຖອຍຫລັງ ເຮົາຈະບໍ່ພໍໃຈໃນຄົນນັ້ນ." 39ສ່ວນພວກເຮົາ, ບໍ່ຢູ່ຝ່າຍ
ຄົນທີ່ຫລົບຖອຍຫລັງຈົນເຖິງຄວາມຈິບຫາຍເສຍ ແຕ່ຢູ່ຝ່າຍຄົນທີ່ມີຄວາມເຊື່ອ ຈົ່ງຮັກສາຊີວິດ

---

[ກ]ພາສາເດີມວ່າ "ໂດຍພຣະໂລຫິດ."

ແລະຈິດໃຈຂອງຕົນໄວ້ໄດ້.

# ບົດທີ 11
## ເລື່ອງຄວາມເຊື່ອ

1ອັນໜຶ່ງ, ຄວາມເຊື່ອຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້ ເປັນຄວາມຕາຍໃຈເຖິງສິ່ງທີ່
ຍັງບໍ່ເຫັນກັບຕາ. 2ເພາະດ້ວຍຄວາມເຊື່ອນີ້ເອງ ພວກເຖົ້າເກົ່າບູຮານໄດ້ຮັບຄຳພະຍານອັນດີ.
3ໂດຍຄວາມເຊື່ອນີ້ເຮົາທັງຫລາຍຈຶ່ງເຂົ້າໃຈວ່າໂລກຈັກກະວານນີ້ໄດ້ຖືກສ້າງຂຶ້ນດ້ວຍພຣະທຳ
ຂອງພຣະເຈົ້າ ດັ່ງນັ້ນສິ່ງທີ່ຕາເຫັນຢູ່ກໍບໍ່ໄດ້ເກີດຈາກສິ່ງທີ່ປະກົດໃຫ້ເຫັນ. 4ເພາະອາເບັນມີ
ຄວາມເຊື່ອນີ້ ຈຶ່ງໄດ້ນຳເອົາເຄື່ອງບູຊາອັນຖືກຕ້ອງກວ່າເຄື່ອງບູຊາຂອງກາອິນມາຖວາຍແດ່
ພຣະເຈົ້າ ຊຶ່ງເຮັດໃຫ້ເພິ່ນໄດ້ຮັບຄຳພະຍານວ່າເປັນຄົນຊອບທຳ ພຣະເຈົ້າກໍໄດ້ຊົງເປັນພະ-
ຍານແກ່ຂອງທານຂອງເພິ່ນ ເຖິງແມ່ນວ່າອາເບັນຕາຍແລ້ວກໍຈິງ ແຕ່ເພາະມີຄວາມເຊື່ອເພິ່ນ
ຈຶ່ງຍັງເວົ້າຢູ່. 5ເພາະເອໂນກມີຄວາມເຊື່ອນີ້ພຣະເຈົ້າຈຶ່ງຊົງຮັບເພິ່ນຂຶ້ນໄປ ເພື່ອບໍ່ໃຫ້ເພິ່ນພົບ
ກັບຄວາມຕາຍ ແລະບໍ່ມີຜູ້ໃດພົບເຫັນເພິ່ນ ເພາະພຣະເຈົ້າຊົງຮັບເອົາເພິ່ນໄປແລ້ວ ອັນໜຶ່ງ,
ກ່ອນທີ່ຊົງຮັບເອົາເພິ່ນຂຶ້ນໄປນັ້ນ ມີຜູ້ເປັນພະຍານວ່າເພິ່ນເປັນທີ່ພໍພຣະໄທພຣະເຈົ້າ. 6ແຕ່ຖ້າບໍ່
ມີຄວາມເຊື່ອແລ້ວຈະເປັນທີ່ພໍພຣະໄທພຣະເຈົ້າບໍ່ໄດ້ ເພາະວ່າຜູ້ທີ່ມາເຝົ້າພຣະເຈົ້າໄດ້ນັ້ນຕ້ອງ
ເຊື່ອວ່າພຣະອົງຊົງພຣະຊົນຢູ່ ແລະພຣະອົງຊົງເປັນຜູ້ປະທານຣາງວັນໃຫ້ແກ່ທຸກຄົນທີ່ສະ-
ແຫວງຫາພຣະອົງ. 7ເພາະໂນອາມີຄວາມເຊື່ອນີ້ ພຣະເຈົ້າຈຶ່ງຊົງຕັກເຕືອນໃຫ້ຮູ້ເຖິງເຫດການ
ທີ່ຍັງບໍ່ປະກົດ ເພິ່ນຈຶ່ງຢຳເກງແລະຕໍ່ນາວາ ເພື່ອໃຫ້ຄອບຄົວຂອງຕົນພົ້ນຈາກຄວາມຕາຍ
ແລະດ້ວຍເຫດນີ້, ເພິ່ນຈຶ່ງຕັດສິນລົງໂທດໃສ່ມະນຸດສະໂລກແລະໄດ້ກາຍເປັນຜູ້ຮັບມໍລະດົກ ຄື
ຄວາມຊອບທຳຊຶ່ງເກີດມາຈາກຄວາມເຊື່ອ.

8ເພາະອັບລາຮາມມີຄວາມເຊື່ອນີ້ ເມື່ອພຣະເຈົ້າຊົງເອີ້ນໃຫ້ເພິ່ນອອກເດີນທາງໄປຍັງບ່ອນທີ່
ເພິ່ນຈະໄດ້ຮັບເປັນມໍລະດົກ ເພິ່ນໄດ້ເຊື່ອຟັງແລະໄດ້ເດີນທາງອອກໄປໂດຍບໍ່ຮູ້ເລີຍວ່າຕົນຈະ
ໄປໃສ. 9ເພາະເພິ່ນມີຄວາມເຊື່ອນີ້ ຈຶ່ງໄດ້ອາໃສຢູ່ໃນແຜ່ນດິນທີ່ຊົງສັນຍາໄວ້ນັ້ນເໝືອນເປັນຄົນ
ຕ່າງດ້າວ ຄືອາໃສຢູ່ໃນຜ້າເຕັນດ້ວຍກັນກັບອີຊາກ ແລະຢາໂຄບ ຜູ້ຊຶ່ງໄດ້ຮ່ວມຮັບພຣະສັນຍາ
ເປັນມໍລະດົກອັນດຽວກັນ. 10ເພິ່ນໄດ້ລໍຄອຍນະຄອນທີ່ຕັ້ງຢູ່ເຖິງຮາກຖານ ຊຶ່ງພຣະເຈົ້າຊົງເປັນ
ນາຍຊ່າງແລະຊົງເປັນຜູ້ສ້າງຂຶ້ນ. 11ເພາະເພິ່ນມີຄວາມເຊື່ອນີ້ ເພິ່ນຈຶ່ງມີກຳລັງໃຫ້ບັງເກີດເຊື້ອ-
ສາຍ ເມື່ອອາຍຸແກ່ເກີນແລ້ວແລະນາງຊາຣາກໍເປັນຄົນໝັນ ແຕ່ອັບຣາຮາມກໍຖືວ່າພຣະອົງຜູ້
ຊົງສັນຍານັ້ນເປັນຜູ້ສັດຊື່. 12ເຫດສັນນັ້ນຈາກຊາຍຄົນດຽວ ຊຶ່ງເກືອບຈະກ່າວໄດ້ວ່າເໝືອນຄົນ
ທີ່ຕາຍແລ້ວນັ້ນ ກໍມີຜູ້ສືບເຊື້ອສາຍເກີດມາຢ່າງຫລວງຫລາຍເໝືອນດວງດາວໃນທ້ອງຟ້າ ແລະ
ເໝືອນເມັດຊາຍທີ່ນັບບໍ່ຖ້ວນຢູ່ແຄມທະເລ. 13ສ່ວນຄົນເຫລົ່ານັ້ນ, ໄດ້ຕາຍໄປໃນຂະນະທີ່ມີ
ຄວາມເຊື່ອ ໂດຍບໍ່ໄດ້ຮັບສິ່ງທີ່ຊົງສັນຍາໄວ້ ແຕ່ເຂົາກໍໄດ້ເຫັນແລະຕ້ອນຮັບໄວ້ຕັ້ງແຕ່ໄກ ແລະ
ຍອມຕົວວ່າເຂົາເປັນພຽງແຕ່ແຂກເມືອງທີ່ທ່ອງທ່ຽວໄປມາໃນໂລກ. 14ເພາະຄົນທີ່ເວົ້າຢ່າງນີ້ ກໍ
ສະແດງໃຫ້ເຫັນຄັກແລ້ວວ່າ ເຂົາກຳລັງສະແຫວງຫາບ້ານເມືອງຂອງຕົນ. 15ຈິງແທ້, ຖ້າເຂົາ

ໄດ້ຄິດເຖິງບ້ານເມືອງທີ່ເຂົາຈາກມາແລ້ວນັ້ນ ເຂົາກໍຄົງຈະມີໂອກາດກັບຄືນໄດ້. 16ແຕ່ບັດນີ້ເຂົາ
ປາດຖະໜາທີ່ຈະຢູ່ໃນເມືອງອັນປະເສີດກວ່ານັ້ນ ຄືເມືອງສະຫວັນ ເຫດສັນນັ້ນ ພຣະເຈົ້າ ຈຶ່ງບໍ່
ຊົງລະອາຍ ເມື່ອເຂົາເອີ້ນພຣະອົງວ່າເປັນ ພຣະເຈົ້າ ຂອງເຂົາ ເພາະພຣະອົງໄດ້ຊົງຈັດແຈງນະ-
ຄອນໜຶ່ງໄວ້ສຳລັບເຂົາແລ້ວ. 17ເພາະ ອັບຣາຮາມ ມີຄວາມເຊື່ອນີ້ ເມື່ອເພິ່ນຖືກລອງໃຈຈຶ່ງໄດ້
ຖວາຍ ອີຊາກ ເປັນເຄື່ອງບູຊາ ເຖິງແມ່ນເພິ່ນເປັນຜູ້ໄດ້ຮັບພຣະສັນຍາ ກໍພ້ອມແລ້ວທີ່ຈະຖວາຍ
ລູກຄົນດຽວຂອງເພິ່ນ. 18ຄືລູກທີ່ມີພຣະສັນຍາກ່າວເຖິງວ່າ, “ເຊື້ອສາຍຂອງເຈົ້າຈະສືບຕໍ່ໄປ
ທາງ ອີຊາກ.” 19ແຕ່ ອັບຣາຮາມ ຄິດວ່າ ພຣະເຈົ້າ ຊົງລິດ ສາມາດໃຫ້ມີການຄືນມາຈາກຕາຍໄດ້
ແລະເພິ່ນກໍໄດ້ຮັບລູກນັ້ນປຽບເໝືອນເປັນຄືນມາແທ້. 20ເພາະ ອີຊາກ ມີຄວາມເຊື່ອນີ້ ຈຶ່ງໄດ້
ອວຍພອນ ຢາໂຄບ ແລະ ເອຊາວ ສຳລັບເຫດການທີ່ຈະເກີດຂຶ້ນໃນພາຍໜ້າ. 21ເພາະ ຢາໂຄບ ມີ
ຄວາມເຊື່ອນີ້ ເມື່ອໃກ້ຈະຕາຍຈຶ່ງໄດ້ອວຍພອນແກ່ລູກຊາຍຂອງ ໂຢເຊັບ ທຸກຄົນ ແລະໝູບນະ-
ມັດສະການ ພຣະເຈົ້າ ເໜືອຫົວໄມ້ເທົ້າຂອງຕົນ. 22ເພາະ ໂຢເຊັບ ມີຄວາມເຊື່ອນີ້ ເມື່ອກຳລັງຈະ
ໝົດຊີວິດຈຶ່ງໄດ້ກ່າວເຖິງເລື່ອງພວກ ອິສຣາເອນ ຈະອອກໄປນັ້ນ ແລະໄດ້ສັ່ງໄວ້ເຖິງເລື່ອງກະ-
ດູກຂອງຕົນ.

23ເພາະພໍ່ແມ່ຂອງ ໂມເຊ ມີຄວາມເຊື່ອນີ້ ເມື່ອ ໂມເຊ ເກີດຈຶ່ງໄດ້ເຊື່ອງໄວ້ລະຫວ່າງສາມເດືອນ
ເພາະເຫັນວ່າ ໂມເຊ ມີຮູບງາມ ແລະພໍ່ແມ່ບໍ່ໄດ້ຢ້ານຂໍ້ດຳລັດຂອງກະສັດ. 24ເພາະ ໂມເຊ ມີຄວາມ
ເຊື່ອນີ້ ເມື່ອໃຫຍ່ມາແລ້ວເພິ່ນບໍ່ຍອມໃຫ້ຜູ້ໃດເອີ້ນຕົນວ່າ ເປັນບຸດຂອງທິດາຂອງຟາໂລ. 25ເພິ່ນ
ເລືອກເອົາການຢູ່ຮ່ວມທຸກລຳບາກກັບພົນລະເມືອງຂອງ ພຣະເຈົ້າ ແທນຄວາມເພີດເພີນຊົ່ວຄາວ
ໃນຄວາມບາບ. 26ເພິ່ນຖືວ່າການອົດທົນຕໍ່ຄວາມອັບອາຍ ເພື່ອ ພຣະຄຣິດ ປະເສີດກວ່າສົມບັດ
ຂອງປະເທດ ເອຢິບ ເພາະເພິ່ນເລງເຫັນລາງວັນທີ່ຈະໄດ້ຮັບນັ້ນ. 27ເພາະມີຄວາມເຊື່ອນີ້ ເພິ່ນຈຶ່ງ
ອອກຈາກປະເທດ ເອຢິບ ເສຍ ໂດຍບໍ່ຢ້ານຄວາມຮ້າຍຂາດຂອງກະສັດນັ້ນ ເພາະເພິ່ນໝັ້ນໃຈ
ເໝືອນກັບວ່າເຫັນພຣະອົງຜູ້ບໍ່ຊົງປະກົດແກ່ຕາ. 28ເພາະມີຄວາມເຊື່ອນີ້ເພິ່ນຈຶ່ງໄດ້ຖືເທດສະ-
ການປັດສະຄາ ແລະພິທີຊິດເລືອດ ເພື່ອບໍ່ໃຫ້ເພັດຊະຄາດຜູ້ປະຫານຊີວິດລູກກົກມາຖືກພວກ ອິ-
ສຣາເອນ ໄດ້. 29ເພາະພວກ ອິສຣາເອນ ມີຄວາມເຊື່ອນີ້ ເຂົາຈຶ່ງຍ່າງຂ້າມທະເລແດງ ເໝືອນກັບ
ຍ່າງເທິງດິນແຫ້ງ ແຕ່ເມື່ອຊາວ ເອຢິບ ໄດ້ທົດລອງຂ້າມເບິ່ງ ເຂົາກໍຈົມນ້ຳຕາຍໝົດ. 30ເພາະມີ
ຄວາມເຊື່ອນີ້ ເມື່ອພວກ ອິສຣາເອນ ໄດ້ວຽນລ້ອມເມືອງ ເຢຣິໂກ ເຖິງ ເຈັດວັນ ແລ້ວກຳແພງເມືອງ
ນັ້ນຈຶ່ງເພພັງລົງ. 31ເພາະມີຄວາມເຊື່ອນີ້ ຣາຮາບ ຍິງໂສເພນີຈຶ່ງບໍ່ຈິບຫາຍໄປພ້ອມກັບຄົນ
ເຫລົ່ານັ້ນທີ່ບໍ່ເຊື່ອຟັງ ເພາະນາງໄດ້ຕອບຮັບພວກສອດແນມເປັນຢ່າງດີ.

32ແລະເຮົາຈະເວົ້າສິ່ງໃດຕໍ່ໄປອີກແດ່ ເພາະບໍ່ມີເວລາພໍທີ່ຈະກ່າວເຖິງ ກີເດໂອນ, ບາຣາກ,
ແຊມຊັນ, ເຢັບທາ, ດາວິດ, ຊາມູເອນ ແລະຜູ້ປະກາດພຣະທຳທັງຫລາຍ. 33ເພາະຄົນເຫລົ່ານີ້
ມີຄວາມເຊື່ອ ເຂົາຈຶ່ງໄດ້ມີໄຊເໜືອແຜ່ນດິນຕ່າງໆ ໄດ້ຈັດຕັ້ງລະບົບຄວາມຍຸດຕິທຳ, ໄດ້ຮັບຜົນ
ຕາມພຣະສັນຍາ, ໄດ້ອັດປາກສິງ. 34ໄດ້ມອດໄຟອັນຮ້ອນກ້າ, ໄດ້ພົ້ນຈາກຄົມດາບ ຄວາມ
ອ່ອນແອຂອງເຂົາກໍກັບກາຍເປັນຄວາມແຂງແຮງ ມີກຳລັງຄວາມສາມາດໃນເສິກສົງຄາມ ໄດ້ຕີ
ກອງທັບຕ່າງປະເທດໃຫ້ແຕກໜີໄປ. 35ພວກຜູ້ຍິງກໍໄດ້ຮັບຄົນທີ່ຕາຍແລ້ວຂອງເຂົາ ໂດຍທາງ

ເປັນຄືນມາອີກລາງຄົນກໍໄດ້ຖືກທໍລະມານ ແຕ່ກໍບໍ່ຍອມຮັບການປົດປ່ອຍ ເພື່ອເຂົາຈະໄດ້ຮັບ
ການຄືນມາອັນປະເສີດກວ່າ. 36ລາງຄົນຖືກທົດລອງໃຈດ້ວຍມີຜູ້ເຍາະເຍີ້ຍແລະຂ້ຽນຕີ ອີກລາງ
ຄົນຖືກລ່າມໂສ້ແລະຖືກຂັງຄຸກເໝືອນກັນ. 37ລາງຄົນໄດ້ຖືກເຂົາຄວ່າງຫີນໃສ່, ໄດ້ຖືກເລື່ອຍ
ເປັນທ່ອນ, ໄດ້ຖືກຂ້າດ້ວຍຄົມດາບເສຍ, ໄດ້ນຸ່ງໜັງແກະໜັງແບ້ທ່ຽວໄປມາ, ອຶດເຂົ້າຫິວ
ນ້ຳ, ທົນທຸກເວທະນາ, ແລະທົນການກົດຂີ່ຂົ່ມເຫງ. 38(ແຜ່ນດິນໂລກກໍບໍ່ສົມກັບຄົນເຫລົ່ານັ້ນ)
ເຂົາໄດ້ທ່ຽວໄປມາໃນປ່າແລະຕາມພູ ຊ່ອນຕົວໃນຖ້ຳແລະໃນຂຸມ. 39ຄົນທັງປວງນີ້, ເຖິງແມ່ນ
ເຂົາໄດ້ຮັບຄຳພະຍານອັນດີຍ້ອນຄວາມເຊື່ອຂອງເຂົາ ແຕ່ເຂົາກໍຍັງບໍ່ໄດ້ຮັບສິ່ງທີ່ຊົງສັນຍາໄວ້
ແລ້ວນັ້ນ. 40ເພາະວ່າພຣະເຈົ້າຊົງຈັດແຈງສິ່ງທີ່ປະເສີດກວ່ານັ້ນສຳລັບພວກເຮົາ ເພື່ອວ່ານອກ-
ຈາກພວກເຮົາເຂົາຈະບໍ່ເຖິງທີ່ສຳເລັດໄດ້.

# ບົດທີ 12

## ເຫດທີ່ອົງພຣະຜູ້ເປັນເຈົ້າຊົງຕີສອນ

1ເຫດສັນນັ້ນ ເມື່ອເຮົາທັງຫລາຍມີຝູງພະຍານຫລວງຫລາຍຢູ່ຮອບຂ້າງຢ່າງນີ້ແລ້ວພວກເຮົາ
ຈົ່ງຊັດຖິ້ມທຸກຢ່າງທີ່ຖ່ວງຢູ່ ແລະຜິດບາບທີ່ຕິດແໜ້ນໂດຍງ່າຍ ສ່ວນການແລ່ນແຂ່ງທີ່ກຳນົດ
ໄວ້ຕໍ່ໜ້າພວກເຮົານັ້ນ ຈົ່ງພາກັນແລ່ນດ້ວຍຄວາມພຽນພະຍາຍາມ. 2ຈົ່ງປັກຕາເບິ່ງພຣະເຢຊູ
ຄືຜູ້ບຸກເບີກຄວາມເຊື່ອແລະຜູ້ຊົງເຮັດໃຫ້ຄວາມເຊື່ອຂອງພວກເຮົາເຖິງທີ່ສຳເລັດ ພຣະອົງໄດ້ຊົງ
ອົດທົນຕໍ່ໄມ້ກາງແຂນ ເພາະເຫັນແກ່ຄວາມຍິນດີທີ່ຕັ້ງໄວ້ຕໍ່ໜ້າພຣະອົງ ພຣະອົງຊົງຖືວ່າຄວາມ
ລະອາຍນັ້ນບໍ່ເປັນສິ່ງສຳຄັນ ຈຶ່ງໄດ້ປະທັບລົງເບື້ອງຂວາພຣະທີ່ນັ່ງຂອງພຣະເຈົ້າ. 3ຈົ່ງພິຈາ-
ລະນາຄຶດເຖິງພຣະອົງ ຜູ້ຊົງອົດທົນການຂັດຂວາງຂອງຄົນບາບທີ່ຕໍ່ສູ້ພຣະອົງ ເພື່ອທ່ານທັງ-
ຫລາຍຈະບໍ່ໄດ້ໝົດກຳລັງໃຈ. 4ໃນການຕໍ່ສູ້ກັບບາບນັ້ນທ່ານທັງຫລາຍບໍ່ໄດ້ຕໍ່ສູ້ເຖິງຂະໜາດ
ເລືອດຕົກ. 5ແລະພວກທ່ານໄດ້ລືມຄຳເຕືອນທີ່ພຣະອົງໄດ້ຊົງເຕືອນໃນຖານະທີ່ເປັນລູກວ່າ,

"ລູກຂອງເຮົາເອີຍ,
ຢ່າປະໝາດຕໍ່ການຕີສອນຂອງອົງພຣະຜູ້ເປັນເຈົ້າ
ແລະຢ່ານ້ອຍໃຈເມື່ອພຣະອົງຊົງຕິຕຽນ.
6 ເພາະວ່າອົງພຣະຜູ້ເປັນເຈົ້າຊົງຕີສອນຜູ້ທີ່ພຣະອົງຊົງຮັກ
ແລະເມື່ອພຣະອົງຊົງຮັບຜູ້ໃດເປັນລູກພຣະອົງກໍຊົງຂ້ຽນສອນຜູ້ນັ້ນ."

7ທ່ານທັງຫລາຍຈົ່ງຮັບແລະທົດເອົາເທາະ ເພາະເປັນການຕີສອນ ພຣະເຈົ້າຊົງປະຕິບັດຕໍ່
ພວກທ່ານໃນຖານະທີ່ພວກທ່ານເປັນລູກຂອງພຣະອົງ ດ້ວຍວ່າມີລູກຄົນໃດແດ່ທີ່ພໍ່ບໍ່ໄດ້ຕີສອນ
ເຂົາ. 8ແຕ່ຖ້າທ່ານທັງຫລາຍບໍ່ໄດ້ຖືກຕີສອນ ຊຶ່ງລູກທຸກຄົນຕ້ອງຖືກນັ້ນ ພວກທ່ານກໍເປັນລູກ
ທາງ ບໍ່ເປັນລູກແທ້. 9ອີກປະການໜຶ່ງ, ເຮົາທັງຫລາຍມີພໍ່ເປັນມະນຸດທີ່ໄດ້ຕີສອນພວກເຮົາ
ແລະພວກເຮົາກໍນັບຖືພໍ່ນັ້ນ ຫລາຍກວ່ານັ້ນອີກ ພວກເຮົາຄວນຢູ່ໃຕ້ບັງຄັບຂອງພຣະບິດາແຫ່ງ
ບັນດາວິນຍານຈິດ ແລະມີຊີວິດຈະເລີນ ບໍ່ແມ່ນຫລື. 10ຝ່າຍພໍ່ເຫລົ່ານັ້ນໄດ້ຕີສອນພວກເຮົາໃນ
ຊົ່ວເວລາເລັກນ້ອຍ ຕາມຄວາມເຫັນດີຂອງເຂົາເທົ່ານັ້ນ ແຕ່ພຣະອົງຊົງຕີສອນພວກເຮົາເພື່ອ

ປະໂຫຍດຂອງພວກເຮົາ ເພື່ອໃຫ້ພວກເຮົາໄດ້ເຂົ້າສ່ວນໃນສະພາບຄວາມບໍລິສຸດຂອງພຣະອົງ.
[11]ໃນຄະນະທີ່ມີການຕີສອນນັ້ນບໍ່ເປັນໜ້າຊື່ນໃຈເລີຍ ມີແຕ່ເລື່ອງເສົ້າໃຈ ແຕ່ຕໍ່ມາພາຍຫລັງຈະ
ກໍໃຫ້ເກີດຜົນ ຄືຄວາມສຸກສຳລານແລະຄວາມຊອບທຳແກ່ບັນດາຄົນທີ່ຖືກແອບສອນແລ້ວນັ້ນ.

## ຕັກເຕືອນບໍ່ໃຫ້ຂາດຈາກພຣະຄຸນ

[12]ເພາະເຫດນັ້ນ "ຈົ່ງຍົກມືທີ່ລ່ອຍອ່ອນ ແລະຫົວເຂົ່າທີ່ອ່ອນກຳລັງ ຈົ່ງໃຫ້ມີກຳລັງຂຶ້ນ."
[13]"ຈົ່ງແປງທາງໃຫ້ຊື່ສຳລັບຕີນ" ຂອງພວກທ່ານ ເພື່ອຂາທີ່ພິການນັ້ນ ແທນທີ່ຈະພິກໂບກກໍຈະ
ດີເປັນປົກກະຕິ.

[14]ຈົ່ງອົດສາພະຍາຍາມທີ່ຈະຢູ່ຢ່າງສະຫງົບສຸກກັບຄົນທັງຫລາຍ ແລະອົດສາພະຍາຍາມທີ່
ຈະໄດ້ໃຈບໍລິສຸດ ຊຶ່ງຖ້າໃຈບໍ່ບໍລິສຸດກໍຈະບໍ່ມີຜູ້ໃດໄດ້ເຫັນອົງພຣະຜູ້ເປັນເຈົ້າ. [15]ຈົ່ງຄ່ອຍຮັກສາ
ໃຫ້ດີ ຢ້ານວ່າຈະມີຜູ້ໃດຂາດຈາກພຣະຄຸນຂອງພຣະເຈົ້າ ຢ້ານວ່າຈະມີຮາກຂົມຂື່ນງອກຂຶ້ນມາ
ເຮັດໃຫ້ມີຄວາມຫຍຸ້ງຍາກ ຊຶ່ງຈະເປັນເຫດໃຫ້ຫລາຍຄົນຊົ່ວມົວໝອງໄປ. [16]ຢ້ານວ່າມີຄົນຂາດ
ສິນທຳຫລືຄົນປະໝາດຕໍ່ສິ່ງສັກສິດ ເໝືອນເອຊາວ, ຜູ້ໄດ້ເອົາສິດຂອງບຸດກົກນັ້ນແລກກັບອາ-
ຫານຄາບດຽວ. [17]ເພາະວ່າທ່ານທັງຫລາຍກໍຮູ້ຢູ່ແລ້ວວ່າ ຕໍ່ມາພາຍຫລັງ, ເມື່ອເອຊາວຢາກໄດ້
ຮັບພອນນັ້ນເປັນມໍລະດົກ ເພິ່ນກໍໄດ້ຮັບແຕ່ຄຳປະຕິເສດ ເຖິງແມ່ນວ່າເພິ່ນໄດ້ສະແຫວງຫາຈົນ
ນໍ້າຕາໄຫລ ກໍບໍ່ມີທາງແກ້ໄຂເລີຍ. [18]ທ່ານທັງຫລາຍບໍ່ໄດ້ມາເຖິງສິ່ງທີ່ຈັບໄດ້, ເຖິງໄຟທີ່ໄໝ້ຢູ່,
ເຖິງທີ່ມືດດຳແລະມືດມົວ, ແລະເຖິງທີ່ລົມພະຍຸ. [19]ເຖິງສຽງແກ, ແລະເຖິງພຣະສຸລະສຽງ ຊຶ່ງ
ຄົນທັງຫລາຍເມື່ອໄດ້ຍິນ ແລ້ວໄດ້ອ້ອນວອນຂໍບໍ່ໃຫ້ຊົງກ່າວຈັກຄຳຕໍ່ເຂົາອີກ. [20]ເພາະວ່າຂໍ້-
ຄວາມທີ່ຊົງບັນຍັດໄວ້ນັ້ນເຂົາທົນບໍ່ໄດ້ ຄືວ່າ, "ແມ່ນແຕ່ສັດເດຍລະສານໂຕໜຶ່ງໂຕໃດ ຖ້າຖືກ-
ຕ້ອງພູນັ້ນກໍຈະຕ້ອງຖືກຄວ່າງດ້ວຍກ້ອນຫີນໃຫ້ຕາຍ." [21]ສິ່ງທີ່ປະກົດນັ້ນກໍເປັນໜ້າຢ້ານຫລາຍ
ປານນັ້ນ ຈົນໂມເຊໄດ້ກ່າວວ່າ, "ຂ້າພະເຈົ້າຢ້ານເຕັມທີ່ ຈົນຕົວສັ່ນ." [22]ແຕ່ທ່ານທັງຫລາຍໄດ້
ມາເຖິງພູຊີໂອນ, ມາເຖິງນະຄອນຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ຄືນະຄອນເຢຣູຊາເລັມຊັ້ນ
ຟ້າ, ມາເຖິງຝູງເທວະດານັບເປັນຈຳນວນໝື່ນໆ ທີ່ຊຸມນຸມກັນເປັນງານມ່ວນຊື່ນ. [23]ມາເຖິງທີ່
ຊຸມນຸມຂອງບຸດກົກຜູ້ມີຊື່ຈາລຶກໄວ້ແລ້ວໃນສະຫວັນ, ມາເຖິງພຣະເຈົ້າຜູ້ຊົງພິພາກສາຄົນທັງ
ປວງ, ແລະມາເຖິງວິນຍານຈິດຂອງຄົນຊອບທຳຜູ້ເຖິງທີ່ສຳເລັດແລ້ວ. [24]ມາເຖິງພຣະເຢຊູຜູ້ຊົງ
ເປັນຜູ້ກາງຝ່າຍຄຳສັນຍາໃໝ່, ແລະມາເຖິງພຣະໂລຫິດຊຶ່ງຊິດໃສ່ແລ້ວ ທີ່ມີສຽງຮ້ອງອັນດີກວ່າ
ເລືອດຂອງອາເບັນອີກ.

[25]ຈົ່ງລະວັງໃຫ້ດີ ຢ່າປະຕິເສດບໍ່ຍອມຟັງພຣະອົງຜູ້ຊົງກ່າວຢູ່ນັ້ນ ເພາະຖ້າຄົນທັງຫລາຍທີ່
ປະຕິເສດບໍ່ຍອມຟັງຄຳເຕືອນຂອງພຣະອົງໃນໂລກ ບໍ່ພົ້ນໂທດທີ່ເຂົາປະຕິເສດນັ້ນ ພວກເຮົາຜູ້
ອວ່າຍໜ້າຈາກພຣະອົງຜູ້ຊົງເຕືອນຈາກສະຫວັນ ກໍຈະບໍ່ພົ້ນໂທດຫລາຍກວ່າເຂົາເຫລົ່ານັ້ນເສຍ
ອີກ. [26]ແມ່ນພຣະສຸລະສຽງຂອງພະອົງນີ້ທີ່ໄດ້ບັນດານໃຫ້ແຜ່ນດິນຫວັ່ນໄຫວໃນຄາວນັ້ນ ແຕ່
ບັດນີ້ພຣະອົງຊົງກ່າວສັນຍາໄວ້ວ່າ, "ຍັງອີກເທື່ອໜຶ່ງເຮົາຈະເຮັດໃຫ້ສະໜັ່ນຫວັ່ນໄຫວ ບໍ່ແມ່ນ
ແຕ່ແຜ່ນດິນໂລກເທົ່ານັ້ນ ແຕ່ທັງທ້ອງຟ້າເໝືອນກັນ." [27]ຂໍ້ຄວາມທີ່ວ່າ "ຍັງອີກເທື່ອໜຶ່ງ" ນັ້ນ
ສະແດງວ່າສິ່ງທີ່ຫວັ່ນໄຫວນັ້ນຈະຖືກຍົກຍ້າຍໄປເສຍ ເໝືອນກັບສິ່ງທີ່ຊົງສ້າງໃຫ້ມີຂຶ້ນເພື່ອໃຫ້

ສິ່ງທີ່ບໍ່ຫວັ່ນໄຫວຍັງຄົງເຫລືອຢູ່. 28ເຫດສັນນັ້ນເນື່ອງດ້ວຍພວກເຮົາຮັບແຜ່ນດິນທີ່ຫວັ່ນໄຫວບໍ່
ໄດ້ແລ້ວ ກໍໃຫ້ພວກເຮົາຂອບພຣະຄຸນ ພຣະເຈົ້າ ເພື່ອພວກເຮົາຈະໄດ້ບົວລະບັດ ພຣະເຈົ້າ ຕາມ
ຊອບທຳພຣະໄທຂອງພຣະອົງ ດ້ວຍຄວາມໂຄລົບຢຳເກງ. 29ເພາະ ພຣະເຈົ້າ ຂອງ ເຮົາທັງ-
ຫລາຍຊົງເປັນໄຟທີ່ເຜົາຜານ.

# ບົດທີ 13

## ການປະຕິບັດທີ່ຊອບພຣະໄທ

1ຈົ່ງໃຫ້ຄວາມຮັກຢ່າງພີ່ນ້ອງມີຢູ່ຕໍ່ກັນສະເໝີໄປ. 2ຢ່າລືມການຕ້ອນຮັບແຂກ ເພາະວ່າດ້ວຍ
ການເຮັດດັ່ງນັ້ນ ບາງຄົນກໍໄດ້ຕ້ອນຮັບເທວະດາໂດຍຕົນບໍ່ທັນຮູ້. 3ຈົ່ງລະນຶກເຖິງຄົນທັງຫລາຍ
ທີ່ຖືກລ່າມໂສ້ ເໝືອນກັບວ່າພວກທ່ານໄດ້ເຂົ້າຮ່ວມໃນການນັ້ນເໝືອນກັນ ຈົ່ງລະນຶກເຖິງຄົນ
ທັງຫລາຍທີ່ຖືກຂົ່ມເຫງ ເພາະວ່າພວກທ່ານກໍມີຮ່າງກາຍເໝືອນກັນ. 4ຈົ່ງໃຫ້ການສົມລົດເປັນທີ່
ນັບຖືແກ່ຄົນທັງປວງ ແລະໃຫ້ຕຽງສົມລົດເວັ້ນຈາກຄວາມຊົ່ວຮ້າຍ ເພາະຄົນຜິດຊາຍຍິງແລະ
ຄົນຫລິ້ນຊູ້ນັ້ນ ພຣະເຈົ້າ ຈະຊົງພິພາກສາລົງໂທດເຂົາ. 5ຈົ່ງໃຫ້ການດຳເນີນຊີວິດຂອງທ່ານເວັ້ນ
ຈາກການຮັກເງິນຮັກຄຳ ຈົ່ງພໍໃຈໃນສິ່ງທີ່ຕົນມີຢູ່ ເພາະ ພຣະເຈົ້າ ເອງຊົງກ່າວໄວ້ວ່າ, "ເຮົາຈະ
ບໍ່ປະເຈົ້າ ຫລືຖິ້ມເຈົ້າເສຍຈັກເທື່ອ." 6ເພາະເຫດນັ້ນເຮົາທັງຫລາຍອາດກ່າວດ້ວຍໃຈກ້າໄດ້ວ່າ,
"ອົງ ພຣະຜູ້ເປັນເຈົ້າ ນີ້ແຫລະ, ຊົງເປັນ ພຣະຜູ້ຊ່ອຍ ຂອງຂ້າພະເຈົ້າຂ້າພະເຈົ້າຈະບໍ່ຢ້ານ, ມະ-
ນຸດຄົນໃດໜໍຈະເຮັດອັນໃດແກ່ຂ້າພະເຈົ້າໄດ້." 7ຈົ່ງລະນຶກເຖິງພວກຜູ້ນຳຂອງທ່ານທັງຫລາຍ
ຄືຜູ້ທີ່ໄດ້ປະກາດພຣະທຳແກ່ພວກທ່ານ ຈົ່ງພິຈາລະນາເບິ່ງຜົນສຸດທ້າຍ ແຫ່ງຊີວິດຂອງ ເຂົາ
ແລະຈົ່ງປະຕິບັດຕາມແບບຢ່າງຄວາມເຊື່ອຂອງເຂົາ. 8ພຣະເຢຊູຄຣິດ ຊົງ ເປັນຜູ້ສະເໝີກັນທັງ
ໃນເວລາວານນີ້, ໃນເວລາວັນນີ້, ແລະສືບໆ ໄປເປັນນິດ. 9ຢ່າຍອມໃຫ້ຄວາມສອນອັນແຕກ
ຕ່າງນັ້ນພາຕົວຫລົງໄປ ເພາະເປັນການດີຢູ່ແລ້ວທີ່ຈະໃຫ້ກຳລັງໃຈເຂັ້ມແຂງຂຶ້ນດ້ວຍພຣະຄຸນ
ບໍ່ແມ່ນດ້ວຍອາຫານການກິນ ຊຶ່ງບໍ່ເປັນປະໂຫຍດແກ່ຄົນປະຕິບັດຕາມ. 10ພວກເຮົາມີແທນບູຊາ
ແທ່ນໜຶ່ງ ຊຶ່ງຄົນຜູ້ປະຕິບັດໃນສຳນັກຜ້ານັ້ນບໍ່ມີສິດທີ່ຈະຮັບປະທານຂອງຈາກແທ່ນນັ້ນໄດ້.
11ດ້ວຍວ່າຊາກສັດເຫລົ່ານັ້ນ ທີ່ມະຫາປະໂລຫິດໄດ້ເອົາເລືອດມັນເຂົ້າໄປໃນສະຖານທີ່ສັກສິດ
ເພື່ອເປັນເຄື່ອງບູຊາລົບລ້າງບາບ ເຂົາເຄີຍເອົາໄປເຜົາເສຍນອກຄ້າຍ. 12ດ້ວຍເຫດນັ້ນ ພຣະ-
ເຢຊູ ກໍເໝືອນກັນໄດ້ຊົງທົນທຸກທໍລະມານນອກປະຕູເມືອງ ເພື່ອຊຳລະພົນລະເມືອງໃຫ້ບໍລິສຸດ
ດ້ວຍພຣະໂລຫິດຂອງພຣະອົງເອງ. 13ເຫດສັນນັ້ນໃຫ້ເຮົາທັງຫລາຍອອກໄປຫາພຣະອົງນອກ
ຄ້າຍນັ້ນ ແລະຍອມທົນເອົາຄຳໝິ່ນປະໝາດ ຊຶ່ງພຣະອົງຊົງທົນເອົານັ້ນ. 14ເພາະວ່າທີ່ນີ້ພວກ
ເຮົາບໍ່ມີນະຄອນອັນຖາວອນ ແຕ່ພວກເຮົາສະແຫວງຫານະຄອນທີ່ຈະມີມາໃນພາຍໜ້ານັ້ນ.
15ເຫດສັນນັ້ນເຮົາທັງຫລາຍຖວາຍຄຳສັນລະເສີນ ເປັນເຄື່ອງບູຊາແດ່ ພຣະເຈົ້າ ໂດຍຕະຫລອດ
ໄປທາງພຣະອົງນັ້ນ ຄືຜົນແຫ່ງຮີມສົບປາກທີ່ຍອມຮັບຮູ້ພຣະນາມຂອງພຣະອົງ. 16ແຕ່ທີ່ຈະທຳ
ຄຸນຄວາມດີແລະມີໃຈເພື່ອແຜ່ເຊິ່ງກັນແລະກັນນັ້ນ ຢ່າໄດ້ລືມເສຍ ເພາະ ເຄື່ອງບູຊາຢ່າງນີ້
ແຫລະ, ເປັນທີ່ພໍພຣະໄທ ພຣະເຈົ້າ.

[17]ທ່ານທັງຫລາຍຈົ່ງຍອມຟັງແລະຍອມຢູ່ໃນໂອວາດຜູ້ນຳຂອງພວກທ່ານ ເພາະເຂົາເຫລົ່າ-
ນັ້ນດູແລຮັກສາຈິດວິນຍານຂອງພວກທ່ານຢູ່ ເໝືອນໜຶ່ງຜູ້ທີ່ຕ້ອງສະເໜີລາຍງານ ເພື່ອເຂົາຈະ
ໄດ້ເຮັດງານນີ້ດ້ວຍຄວາມຊື່ນໃຈ ບໍ່ແມ່ນດ້ວຍຄວາມເສົ້າໃຈຊຶ່ງຈະບໍ່ເປັນປະໂຫຍດແກ່ທ່ານທັງ-
ຫລາຍ. [18]ຈົ່ງອ້ອນວອນເພື່ອພວກເຮົາຢູ່ ເພາະເຮົາເຊື່ອແນ່ວ່າພວກເຮົາມີໃຈສຳນຶກຜິດແລະ
ຊອບອັນດີຢູ່ແລ້ວ ແລະປາດຖະໜາທີ່ຈະດຳເນີນຊີວິດຕາມຢ່າງດີໃນທຸກສິ່ງ. [19]ຂ້າພະເຈົ້າຂໍ
ເຮ່ງຮັດພວກທ່ານຫລາຍຂຶ້ນ ໃຫ້ອ້ອນວອນຢ່າງນັ້ນ ເພື່ອຈະຊົງໂຜດໃຫ້ຂ້າພະເຈົ້າກັບຄືນໄປຢູ່
ກັບພວກທ່ານໂດຍໄວ.

## ຄຳອວຍພອນແລະຄຳຄຳນັບອັນສຸດທ້າຍ

[20]ຂ້າພະເຈົ້າຜູ້ຊົງໂຜດສັນຕິສຸກ, ຜູ້ໄດ້ຊົງນຳພຣະເຢຊູເຈົ້າຂອງເຮົາທັງຫລາຍໃຫ້ຄືນມາ
ຈາກຄວາມຕາຍ, ຄືຜູ້ຊົງເປັນຜູ້ລ້ຽງແກະອົງໃຫຍ່ ດ້ວຍພຣະໂລຫິດທີ່ກ່ຽວກັບຄຳສັນຍາອັນຕັ້ງຢູ່
ເປັນນິດນັ້ນ. [21]ຈົ່ງຊົງກະທຳໃຫ້ທ່ານທັງຫລາຍເປັນຄົນຄົບຖ້ວນໃນການດີທຸກຢ່າງ ເພື່ອຈະໄດ້
ປະຕິບັດຕາມພຣະໄທພຣະອົງ ແລະຊົງທຳງານພາຍໃນທ່ານທັງຫລາຍຕາມທີ່ຊອບໃນສາຍ
ພຣະເນດຂອງພຣະອົງ ໂດຍທາງພຣະເຢຊູຄຣິດ ສະຫງ່າລາສີຈົ່ງມີແດ່ພຣະຄຣິດສືບໆ ໄປ
ເປັນນິດ ອາແມນ.

[22]ພີ່ນ້ອງທັງຫລາຍເອີຍ, ຂ້າພະເຈົ້າອ້ອນວອນທ່ານທັງຫລາຍໃຫ້ພຽນຟັງຄຳເຕືອນສະຕິນີ້
ເພາະຂ້າພະເຈົ້າໄດ້ຂຽນມາຫາພວກທ່ານບໍ່ຫລາຍຄຳ. [23]ຈົ່ງຮູ້ວ່າຕີໂມທຽວນ້ອງຂອງເຮົາທັງ-
ຫລາຍຖືກປ່ອຍແລ້ວ ຖ້າເພິ່ນມາຮອດໄວ ຂ້າພະເຈົ້າຈະມາຢ້ຽມຢາມພວກທ່ານພ້ອມກັບເພິ່ນ.
[24]ຂ້າພະເຈົ້າຂໍຝາກຄວາມຄິດເຖິງມາຍັງບັນດາຜູ້ນຳຂອງພວກທ່ານ ແລະໄພ່ພົນທັງປວງຂອງ
ພຣະເຈົ້າ ພວກພີ່ນ້ອງທີ່ມາຈາກອີຕາເລຍກໍຝາກຄວາມຄິດເຖິງມາຍັງພວກທ່ານ. [25]ຂໍພຣະຄຸນ
ຈົ່ງສະຖິດຢູ່ກັບທ່ານທັງຫລາຍເທີນ.

* * *

# ຈົດໝາຍຂອງ
# ຢາໂກໂບ

## ບົດທີ 1

1ຈາກ ຢາໂກໂບຜູ້ເປັນຂ້ອຍໃຊ້ຂອງ ພຣະເຈົ້າ ແລະຂອງ ພຣະເຢຊູຄຣິດ ເຈົ້າ ເຖິງຄົນສິບ
ສອງກະກຸນທີ່ກະຈັດກະຈາຍຢູ່ນັ້ນ.

### ຄວາມເຊື່ອແລະຄວາມຖ່ອມໃຈ

2ພີ່ນ້ອງທັງຫລາຍຂອງຂ້າພະເຈົ້າເອີຍ, ເມື່ອພວກທ່ານປະສົບການທົດລອງຕ່າງໆ ຈົ່ງຖືວ່າ
ເປັນເລື່ອງໜ້າຍິນດີທີ່ສຸດ. 3ເພາະທ່ານທັງຫລາຍຮູ້ຢູ່ວ່າການລອງເບິ່ງຄວາມເຊື່ອຂອງພວກ
ທ່ານນັ້ນ ໃຫ້ເກີດຄວາມໝັ້ນໃຈ. 4ແລະຈົ່ງໃຫ້ຄວາມໝັ້ນໃຈນັ້ນດຳເນີນງານຈົນສຳເລັດ ເພື່ອ
ທ່ານທັງຫລາຍຈະໄດ້ເປັນຄົນສຳເລັດແລະຄົບຖ້ວນໂດຍບໍ່ຂາດເຂີນສິ່ງໃດ. 5ແຕ່ຖ້າຄົນໃດໃນ
ພວກທ່ານຂາດສະຕິປັນຍາ ກໍໃຫ້ຜູ້ນັ້ນທູນຂໍຈາກ ພຣະເຈົ້າ ຜູ້ຊົງໂຜດປະທານໃຫ້ແກ່ຄົນທັງ
ປວງດ້ວຍພຣະກະລຸນາແລະບໍ່ຊົງກ່າວຕິ ແລະຜູ້ນັ້ນກໍຈະໄດ້ຮັບສິ່ງທີ່ທູນຂໍ. 6ແຕ່ໃຫ້ຜູ້ນັ້ນທູນຂໍ
ດ້ວຍຄວາມເຊື່ອ ຢ່າໃຫ້ມີໃຈສົງໃສ ເພາະຜູ້ທີ່ສົງໃສນັ້ນເປັນເໝືອນຟອງນ້ຳທີ່ຖືກລົມພັດຊັດໄປ
ມາ. 7ຢ່າໃຫ້ຜູ້ນັ້ນຄຶດວ່າຕົນຈະໄດ້ຮັບສິ່ງໃດຈາກອົງ ພຣະຜູ້ເປັນເຈົ້າ. 8ເປັນຄົນສອງໃຈ ບໍ່ແນ່-
ນອນໃນບັນດາທາງຂອງຕົນ.
9ໃຫ້ພີ່ນ້ອງທີ່ຕ່ຳຕ້ອຍຈົ່ງອວດອ້າງໃນການທີ່ ພຣະເຈົ້າ ຊົງຍົກຍໍຕົວຂຶ້ນ. 10ແຕ່ໃຫ້ຄົນຮັ່ງມີຈົ່ງ
ອວດອ້າງໃນການທີ່ ພຣະເຈົ້າ ຊົງໃຫ້ຕົກຕ່ຳລົງ ເພາະວ່າຕົນຈະຕ້ອງລ່ວງລັບໄປເໝືອນດັ່ງດອກ
ຫຍ້າ. 11ເພາະເມື່ອຕາເວັນຂຶ້ນ ຄວາມຮ້ອນອັນແຮງກ້າກໍເຮັດໃຫ້ຫຍ້າຫ່ຽວແຫ້ງໄປ ແລ້ວດອກ
ຫຍ້າກໍຕົກຫລົ່ນລົງ ສີສັນວັນນະຄວາມງາມຂອງມັນກໍສຸດສິ້ນໄປ ດັ່ງນີ້ແຫລະ, ຄົນຮັ່ງມີຈະ
ເສື່ອມສູນໄປໃນຂະນະທີ່ດຳເນີນງານຂອງຕົນເໝືອນກັນ.

### ການທົດລອງໃຈແລະການລໍ້ລວງ

12ຄົນທີ່ອົດທົນຕໍ່ການທົດລອງໃຈກໍເປັນສຸກ ເພາະເມື່ອປະກົດວ່າຜູ້ນັ້ນທົນໄດ້ແລ້ວກໍຈະໄດ້
ຮັບພວງມາໄລແຫ່ງຊີວິດ ຊຶ່ງ ພຣະເຈົ້າ ໄດ້ຊົງສັນຍາໄວ້ແກ່ຄົນທັງຫລາຍທີ່ຮັກພຣະອົງ. 13ເມື່ອ
ຜູ້ໃດຖືກລໍ້ລວງໃຫ້ຫລົງ ຢ່າໃຫ້ຜູ້ນັ້ນເວົ້າວ່າ, "ພຣະເຈົ້າ ຊົງລໍ້ລວງຂ້າພະເຈົ້າໃຫ້ຫລົງ" ເພາະ-
ວ່າຄວາມຊົ່ວຈະມາລໍ້ລວງ ພຣະເຈົ້າ ໃຫ້ຫລົງບໍ່ໄດ້ ແລະພຣະອົງເອງກໍບໍ່ຊົງລໍ້ລວງໃຫ້ຜູ້ໃດຫລົງ
ຈັກເທື່ອ. 14ແຕ່ວ່າທຸກຄົນກໍຖືກລໍ້ລວງໃຫ້ຫລົງ ເມື່ອກິເລດຂອງຕົນເອງຊັກຈູງແລະເຍາະເຍີ້ຍ
ໃຫ້ເຮັດຕາມ. 15ເມື່ອກິເລດຕັ້ງຮາກແລ້ວກໍໃຫ້ເກີດຄວາມຜິດບາບ ແລະເມື່ອຄວາມຜິດບາບຄົບ
ຖ້ວນແລ້ວກໍໃຫ້ເກີດຄວາມຕາຍ. 16ພີ່ນ້ອງທີ່ຮັກຂອງເຮົາເອີຍ, ຢ່າໄດ້ຫລົງຜິດໄປ. 17ການປະ-
ທານອັນດີທຸກຢ່າງແລະຂອງປະທານອັນດີເລີດທຸກຢ່າງຍ່ອມມາແຕ່ທັງເທິງ ແລະລົງມາຈາກ
ພຣະບິດາແຫ່ງບັນດາດວງສະຫວ່າງ ໃນພຣະບິດານັ້ນບໍ່ມີການປ່ຽນແປງ ແລະບໍ່ມີເງົາເນື່ອງຈາກ

ການຊົງໝູນວຽນ. 18ໂດຍນ້ຳພຣະໄທຂອງພຣະອົງເອງນັ້ນ ພຣະອົງຈຶ່ງຊົງບັນດານໃຫ້ພວກເຮົາ
ບັງເກີດດ້ວຍພຣະທຳອັນສັດຈິງ ເພື່ອພວກເຮົາຈະເປັນຢ່າງຜົນແຣກແຫ່ງສິ່ງທັງຫລາຍທີ່ພຣະ-
ອົງຊົງສ້າງ.

## ການຟັງແລະການຂັບຕາມພຣະທຳ

19ພີ່ນ້ອງທີ່ຮັກຂອງເຮົາເອີຍ, ພວກເຈົ້າກໍຮູ້ຂໍ້ນີ້ແລ້ວ ແຕ່ຈົ່ງວ່ອງໄວໃນການຟັງ ຈົ່ງຊ້າໃນ
ການເວົ້າ, ຈົ່ງຊ້າໃນການຮ້າຍ. 20ເພາະຄວາມຮ້າຍຂອງມະນຸດບໍ່ໄດ້ເຮັດໃຫ້ຄວາມຍຸດຕິທຳ
ຂອງພຣະເຈົ້າເກີດມາ. 21ເຫດສັນນັ້ນ, ຈົ່ງເລີກຈາກຄວາມຊົ່ວມົວໝອງທຸກຢ່າງ ແລະຄວາມ
ຊົ່ວຮ້າຍອັນເຫລືອຫລາຍ ຈົ່ງນ້ອມໃຈຮັບເອົາພຣະທຳທີ່ປູກຝັງໄວ້ແລ້ວນັ້ນ ຊຶ່ງສາມາດຊ່ອຍຈິດ
ວິນຍານຂອງພວກທ່ານໃຫ້ພົ້ນໄດ້. 22ແຕ່ທ່ານທັງຫລາຍຈົ່ງກາຍເປັນຜູ້ຂັບຕາມພຣະໄທນັ້ນ ບໍ່
ແມ່ນເປັນແຕ່ພຽງຜູ້ໄດ້ຍິນເທົ່ານັ້ນ ຊຶ່ງເປັນການລໍ້ລວງຕົນເອງ. 23ເພາະວ່າຖ້າຜູ້ໃດໄດ້ຍິນ
ພຣະທຳແລະບໍ່ຂັບຕາມ ຜູ້ນັ້ນກໍເປັນເໝືອນຄົນທີ່ເບິ່ງໜ້າຂອງຕົນໃນແວ່ນ. 24ເພາະເມື່ອແຍງ
ເບິ່ງຕົວເອງແລ້ວກໍອອກໄປ ແລ້ວກໍລືມໃນທັນທີນັ້ນໂລດວ່າຕົວເອງເປັນຢ່າງໃດ. 25ແຕ່ຜູ້ທີ່ພິ-
ຈາລະນາເບິ່ງໃນພຣະບັນຍັດອັນດີທີ່ສຸດ ຊຶ່ງເປັນພຣະບັນຍັດທີ່ໃຫ້ເສລີພາບ ແລະຕັ້ງຢູ່ໃນ
ພຣະທຳບັນຍັດນັ້ນ ຜູ້ນັ້ນບໍ່ເປັນຜູ້ໄດ້ຍິນແລ້ວຫລົງລືມໄປ ແຕ່ເປັນຜູ້ຂັບຕາມ ຜູ້ນັ້ນແຫລະ, ຈະ
ໄດ້ຮັບຄວາມສຸກໃນກິດຈະການຂອງຕົນ.[ກ] 26ຖ້າຜູ້ໃດຄຶດວ່າຕົນເປັນຄົນມີທຳມະ ແລະບໍ່ໄດ້
ຫ້າມລີ້ນຂອງຕົນ ແຕ່ລໍ້ລວງຕົວເອງ ທຳມະຂອງຄົນນັ້ນກໍບໍ່ມີປະໂຫຍດ. 27ທຳມະທີ່ບໍລິສຸດ
ແລະບໍ່ມີການຊົ່ວມົວໝອງຕໍ່ພຣະພັກພຣະເຈົ້າ ຜູ້ຊົງເປັນພຣະບິດາ ກໍມີດັ່ງນີ້ ຄືການຢ້ຽມຢາມ
ລູກກຳພ້າແລະຍິງໝ້າຍທີ່ມີຄວາມທຸກຮ້ອນ ແລະການຮັກສາຕົວໃຫ້ພົ້ນຈາກການດ່າງພ້ອຍຂອງ
ໂລກ.

# ບົດທີ 2

## ຕັກເຕືອນບໍ່ໃຫ້ເລືອກໜ້າຄົນ

1ພີ່ນ້ອງທັງຫລາຍຂອງເຮົາເອີຍ, ໃນການທີ່ພວກເຈົ້າຖືພຣະສາດສະໜາຝ່າຍພຣະເຢຊູຄຣິດ
ເຈົ້າຂອງເຮົາທັງຫລາຍ ຜູ້ຊົງສະຫງ່າລາສີນັ້ນ ຢ່າມີການເລືອກໜ້າຄົນ. 2ສົມມຸດວ່າມີຄົນໜຶ່ງຖື
ແຫວນຄຳແລະແຕ່ງຕົວງົດງາມ ເຂົ້າມາໃນທີ່ປະຊຸມຂອງພວກເຈົ້າ ແລະມີຄົນຈົນຜູ້ໜຶ່ງນຸ່ງ
ເຄື່ອງເປື້ອນເປິເຂົ້າມາເໝືອນກັນ. 3ຖ້າພວກເຈົ້າຈະສົນໃຈໃນຄົນທີ່ແຕ່ງຕົວງົດງາມນັ້ນ ແລະ
ກ່າວທັກທາຍປາໄສຮັບຕ້ອນຮັບຜູ້ນັ້ນວ່າ, “ເຊີນນັ່ງບ່ອນເໝາະສົມນີ້ເທີ້ນ” ແລະໃນຂະນະດຽວ
ນັ້ນເຈົ້າຈະກ່າວແກ່ຄົນຈົນນັ້ນວ່າ, “ໃຫ້ເຈົ້າຢືນຢູ່ຫັ້ນ” ຫລື “ໃຫ້ເຈົ້ານັ່ງທີ່ຕັ່ງຮອງຕີນເຮົານີ້.”
4ຖ້າເຮັດດັ່ງນັ້ນພວກເຈົ້າເປັນຜູ້ແບ່ງຊັ້ນວັນນະ ແລະກາຍເປັນຜູ້ຕັດສິນດ້ວຍຄວາມຄຶດອັນຊົ່ວ
ບໍ່ແມ່ນຫລື. 5ພວກພີ່ນ້ອງທີ່ຮັກຂອງເຮົາເອີຍ, ພຣະເຈົ້າໄດ້ຊົງເລືອກຄົນຍາກຈົນໃນໂລກໃຫ້
ເປັນຄົນຮັ່ງມີຝ່າຍຄວາມເຊື່ອ ແລະໃຫ້ເປັນຜູ້ຮັບແຜ່ນດິນ ຊຶ່ງພຣະອົງຊົງສັນຍາໄວ້ວ່າຈະປະ-
ທານໃຫ້ແກ່ຄົນທັງຫລາຍທີ່ຮັກພຣະອົງນັ້ນມາເປັນມໍລະດົກ ບໍ່ແມ່ນຫລື. 6ແຕ່ພວກເຈົ້າໄດ້ປະ-

[ກ]ຫລືວ່າ “ຈະໄດ້ຮັບພຣະພອນໃນການຂັບຕາມຂອງຕົນ.”

ໝາດຄົນຈົນ ບໍ່ແມ່ນຄົນຮັ່ງມີນັ້ນຫລື ທີ່ກົດຂີ່ຂົ່ມເຫງພວກເຈົ້າ ບໍ່ແມ່ນເຂົາເຫລົ່ານັ້ນຫລື ທີ່ລາກ
ດຶງພວກເຈົ້າຂຶ້ນສານ. [7]ບໍ່ແມ່ນເຂົາເຫລົ່ານັ້ນຫລື ທີ່ໝິ່ນປະໝາດພຣະນາມອັນປະເສີດທີ່ໃຊ້ເອີ້ນ
ພວກເຈົ້າ. [8]ຖ້າພວກເຈົ້າທັງຫລາຍຂັບຕາມພຣະລາຊະບັນຍັດໂດຍຄົບຖ້ວນຕາມພຣະຄຳພີຂໍ້ທີ່
ວ່າ, “ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ” ພວກເຈົ້າກໍເຮັດດີຢູ່. [9]ແຕ່ຖ້າເຈົ້າທັງຫລາຍເລືອກ
ໜ້າຄົນ ພວກເຈົ້າກໍເຮັດຜິດ ແລະພຣະບັນຍັດຕັດສິນພວກເຈົ້າວ່າເປັນຄົນລ່ວງລະເມີດ.
[10]ເພາະວ່າຖ້າບຸກຄົນໃດຖືຮັກສາພຣະບັນຍັດໄດ້ທັງໝົດແຕ່ຜິດຢູ່ຂໍ້ດຽວ ຜູ້ນັ້ນກໍກາຍເປັນຜູ້ຜິດ
ພຣະບັນຍັດທັງໝົດ. [11]ເພາະວ່າພຣະອົງຜູ້ໄດ້ຊົງກ່າວວ່າ, “ຢ່າຫລິ້ນຊູ້ສູ່ຜົວເມຍທ່ານ” ກໍໄດ້ຊົງ
ກ່າວອີກວ່າ, “ຢ່າຂ້າຄົນ” ດັ່ງນັ້ນຖ້າພວກເຈົ້າບໍ່ໄດ້ຫລິ້ນຊູ້ແຕ່ໄດ້ຂ້າຄົນ ເຈົ້າກໍກາຍເປັນຜູ້ລ່ວງ
ລະເມີດພຣະບັນຍັດ. [12]ເຈົ້າທັງຫລາຍຈົ່ງເວົ້າແລະເຮັດ ເໝືອນຢ່າງຄົນທີ່ຈວນຈະໄດ້ຮັບການ
ພິພາກສາດ້ວຍກົດທີ່ໃຫ້ມີເສລີພາບ. [13]ເພາະວ່າໃນການພິພາກສາ ພຣະເຈົ້າຈະບໍ່ຊົງສະແດງ
ຄວາມເມດຕາຕໍ່ຜູ້ທີ່ບໍ່ໄດ້ສະແດງຄວາມເມດຕາ ສ່ວນຄວາມເມດຕາຍ່ອມມີໄຊຊະນະເໜືອການ
ພິພາກສາ.

## ຄວາມເຊື່ອທີ່ບໍ່ມີການປະຕິບັດຕາມກໍໄຮ້ຜົນ

[14]ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຖ້າຜູ້ໃດຈະເວົ້າວ່າຕົນມີຄວາມເຊື່ອແຕ່ບໍ່ມີການປະຕິບັດ
ຈະໄດ້ປະໂຫຍດອັນໃດ ຄວາມເຊື່ອນັ້ນອາດຈະໃຫ້ຕົນພົ້ນໄດ້ຫລື. [15]ຖ້າພີ່ນ້ອງຊາຍຍິງຄົນໃດບໍ່
ມີເຄື່ອງນຸ່ງຫົ່ມແລະຂາດເຂີນອາຫານປະຈຳວັນ. [16]ແລະມີຄົນໃດໃນພວກເຈົ້າເວົ້າແກ່ເຂົາວ່າ,
“ຈົ່ງໄປເປັນສຸກເທີນ, ຂໍໃຫ້ອົບອຸ່ນແລະກິນອີ່ມແຕ່ບໍ່ໄດ້ໃຫ້ສິ່ງຂອງທີ່ເຂົາຕ້ອງການສຳລັບຕົວນັ້ນ
ຈະເປັນປະໂຫຍດອັນໃດ. [17]ດັ່ງນັ້ນແຫລະ, ຄວາມເຊື່ອກໍຢ່າງດຽວກັນ ຖ້າບໍ່ມີການປະຕິບັດກໍ
ຕາຍແລ້ວ. [18]ແຕ່ບາງຄົນຈະກ່າວວ່າ, “ຝ່າຍເຈົ້າ, ເຈົ້າມີຄວາມເຊື່ອ ແຕ່ຝ່າຍຂ້ອຍມີການປະຕິ-
ບັດ” ຈົ່ງສະແດງໃຫ້ເຮົາເຫັນວ່າຄວາມເຊື່ອຂອງເຈົ້າຊຶ່ງບໍ່ມີການປະຕິບັດ ແລະຝ່າຍເຮົາຈະສະ-
ແດງໃຫ້ເຈົ້າເຫັນຄວາມເຊື່ອຂອງເຮົາດ້ວຍການປະຕິບັດຂອງເຮົານັ້ນ. [19]ຝ່າຍພວກເຈົ້າກໍເຊື່ອຕີ້
ວ່າມີພຣະເຈົ້າແຕ່ອົງດຽວນັ້ນກໍດີຢູ່ແລ້ວ ສ່ວນຜີຮ້າຍກໍເຊື່ອເໝືອນກັນແລະຢ້ານຈົນຕົວສັ່ນ.
[20]ໂອ ຄົນໂງ່ເຮີຍ, ເຈົ້າຢາກຮຽນຮູ້ຫລືວ່າ ຄວາມເຊື່ອທີ່ບໍ່ມີການປະຕິບັດນັ້ນກໍໄຮ້ຜົນ.
[21]ເມື່ອອັບຣາຮາມບັນພະບຸລຸດຂອງພວກເຮົາ ໄດ້ນຳເອົາອີຊາກບຸດຂອງຕົນມາຖວາຍເທິງແທ່ນ
ບູຊາ ກໍໄດ້ຊົງຖືວ່າຊອບທຳເພາະການປະຕິບັດ ບໍ່ແມ່ນຫລື. [22]ພວກເຈົ້າກໍເຫັນແລ້ວວ່າ ຄວາມ
ເຊື່ອຂອງອັບຣາຮາມກໍຮ່ວມກັນກັບການປະຕິບັດຂອງຕົນ ແລະດ້ວຍການປະຕິບັດນັ້ນແຫລະ,
ຄວາມເຊື່ອຈຶ່ງໄດ້ເຖິງທີ່ສຳເລັດ. [23]ແລະພຣະຄຳພີກໍສຳເລັດທີ່ກ່າວວ່າ, “ອັບຣາຮາມໄດ້ເຊື່ອ
ພຣະເຈົ້າ ແລະພຣະອົງຊົງຖືວ່າຄວາມເຊື່ອນັ້ນເປັນຄວາມຊອບທຳແກ່ທ່ານ” ແລະພຣະເຈົ້າຊົງ
ເອີ້ນເພິ່ນວ່າ “ສະຫາຍຂອງເຮົາ.” [24]ເຈົ້າທັງຫລາຍກໍເຫັນແລ້ວວ່າຜູ້ໃດຈະໄດ້ຊົງຖືວ່າຊອບທຳ
ກໍເນື່ອງດ້ວຍການປະຕິບັດແລະບໍ່ແມ່ນດ້ວຍຄວາມເຊື່ອພຽງຢ່າງດຽວ. [25]ໃນທຳນອງດຽວກັນ
ນາງຣາຮາບຍິງໂສເພນີໄດ້ຮັບຕ້ອນຜູ້ສົ່ງຂ່າວ ແລ້ວໃຫ້ເຂົາກັບເມືອເສຍທາງອື່ນ ກໍໄດ້ຊົງຖືວ່າ
ຊອບທຳເນື່ອງດ້ວຍການປະຕິບັດ ບໍ່ແມ່ນຫລື. [26]ເຫດວ່າຮ່າງກາຍທີ່ບໍ່ມີຈິດວິນຍານ[ກ] ກໍຕາຍ

[ກ]ຫລື “ບໍ່ມີລົມຫັນໃຈ.”

ແລ້ວສັນໃດ ຄວາມເຊື່ອທີ່ບໍ່ມີການປະຕິບັດກໍຕາຍແລ້ວສັນນັ້ນເໝືອນກັນ.

# ບົດທີ 3

## ເລື່ອງລີ້ນ

1ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຢ່າໄດ້ພາກັນເປັນອາຈານຈຳນວນຫລວງຫລາຍເພາະພວກ
ເຈົ້າກໍຮູ້ແລ້ວວ່າເຮົາທັງຫລາຍທີ່ເປັນຜູ້ສອນນັ້ນ ຈະໄດ້ຮັບການຊົງພິພາກສາໜັກໜ່ວງກວ່າຜູ້
ອື່ນ. 2ເພາະວ່າພວກເຮົາທຸກຄົນເຮັດຜິດພາດຢູ່ເລື້ອຍຖ້າຜູ້ໃດບໍ່ໄດ້ເຮັດຜິດທາງວາຈາ ຜູ້ນັ້ນ
ແຫລະ, ເປັນຄົນສຳເລັດແລ້ວ ແລະສາມາດບັງຄັບທັງຕົວໄວ້ໄດ້ເໝືອນກັນ. 3ຖ້າພວກເຮົາເອົາ
ບັງຫຽນໃສ່ປາກມ້າເພື່ອໃຫ້ມັນຟັງຄວາມ ພວກເຮົາກໍສາມາດບັງຄັບທັງຕົວມັນໃຫ້ຫັນໄປມາ.
4ເບິ່ງແມ, ເຮືອກໍເໝືອນກັນ ເຖິງແມ່ນວ່າເປັນເຮືອໃຫຍ່ແລະຖືກລົມພັດແລ່ນໄປ ເຮືອນັ້ນກໍຍັງ
ຫັນໄປມາດ້ວຍໄມ້ໂທມທ້າຍອັນນ້ອຍໆ ຕາມໃຈປະສົງຂອງນາຍທ້າຍ. 5ລີ້ນກໍເໝືອນກັນນັ້ນ
ແຫລະ ເປັນອະໄວຍະວະນ້ອຍໆ ແລະເວົ້າອວດອ້າງເລື່ອງໃຫຍ່ໆ, 6ເບິ່ງແມ, ໄຟໜ້ອຍດຽວ
ສາມາດຈຸດເຜົາປ່າກວ້າງເທົ່າໃດໜໍ ລີ້ນນັ້ນກໍເປັນໄຟລີ້ນຄືໂລກອັນຊົ່ວຮ້າຍທີ່ຕັ້ງຢູ່ລະຫວ່າງ
ບັນດາອະໄວຍະວະຂອງພວກເຮົາ, ເປັນເຫດໃຫ້ທັງຕົວຊົ່ວມົວໝອງໄປ, ເປັນເຊື້ອໄຟທີ່ເຜົາໄໝ້
ວົງກະແສແຫ່ງຊີວິດ ແລະມັນເອງກໍຕິດໄຟມາຈາກນະລົກ.

7ເພາະວ່າສັດເດຍລະສານທຸກຊະນິດ ຄືສັດປ່າແລະນົກທັງສັດເລືອຄານແລະສັດໃນທະເລ
ເອົາມາເຝິກແອບໄດ້ ແລະມະນຸດກໍໄດ້ບັງຄັບໃຫ້ຟັງຄວາມແລ້ວ. 8ແຕ່ລີ້ນນັ້ນບໍ່ມີມະນຸດຄົນໃດ
ສາມາດເຝິກແອບໄດ້ ມັນເປັນສິ່ງຊົ່ວເຫລືອຄວາມບັງຄັບ ແລະເຕັມໄປດ້ວຍພິດຮ້າຍທີ່ເຮັດໃຫ້
ຕາຍ. 9ພວກເຮົາໃຊ້ລີ້ນນັ້ນສັນລະເສີນອົງພຣະຜູ້ເປັນເຈົ້າ ຄືພຣະບິດາຂອງເຮົາທັງຫລາຍ
ດ້ວຍລີ້ນນັ້ນແຫລະ, ພວກເຮົາຍັງປ້ອຍດ່າມະນຸດທີ່ພຣະເຈົ້າຊົງສ້າງໄວ້ຕາມຮູບເງົາຂອງພຣະ-
ອົງ. 10ຄຳສັນລະເສີນແລະຄຳປ້ອຍດ່າກໍອອກມາຈາກປາກອັນດຽວກັນ ພີ່ນ້ອງທັງຫລາຍຂອງ
ເຮົາເອີຍ, ບໍ່ຄວນໃຫ້ການແນວນັ້ນເກີດມີມາ. 11ບໍ່ນ້ຳພຸຈະໃຫ້ນ້ຳຫວານແລະນ້ຳຂົມພຸ່ງອອກມາ
ຈາກຮູດຽວກັນຫລື. 12ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຕົ້ນເດື່ອເທດຈະເກີດຜົນເປັນໝາກກອກ
ໄດ້ຫລື ຫລືເຄືອອະງຸ່ນຈະເກີດຜົນເປັນໝາກເດື່ອເທດໄດ້ຫລື ດັ່ງນັ້ນແຫລະ, ນ້ຳເຄັມຈະເກີດ
ເປັນນ້ຳຈືດບໍ່ໄດ້.

## ປັນຍາທີ່ມາຈາກເບື້ອງເທິງ

13ໃນພວກເຈົ້າຜູ້ໃດມີສະຕິປັນຍາແລະຄວາມເຂົ້າໃຈ ກໍໃຫ້ຜູ້ນັ້ນສະແດງການປະຕິບັດຂອງ
ຕົນໂດຍກິລິຍາອັນດີ ມີໃຈອ່ອນສຸພາບປະກອບດ້ວຍປັນຍາ. 14ແຕ່ຖ້າພວກເຈົ້າມີໃຈເຫິງສາອັນ
ຂົມຂື່ນແລະມັກໃຫຍ່ໄຝ່ສູງ ກໍຢ່າໂອ້ອວດແລະຢ່າທໍລະຍົດຕໍ່ຄວາມຈິງ. 15ປັນຍາຢ່າງນີ້ບໍ່ໄດ້ລົງ
ມາຈາກເບື້ອງເທິງ ແຕ່ເປັນປັນຍາຢ່າງໂລກ, ເປັນຢ່າງທຳມະດາມະນຸດແລະເໝືອນຢ່າງຜີຮ້າຍ.
16ເພາະວ່າທີ່ໃດມີຄວາມເຫິງສາແລະຄວາມມັກໃຫຍ່ໄຝ່ສູງ ທີ່ນັ້ນກໍວຸ້ນວາຍແລະມີການເຮັດຊົ່ວ
ຮ້າຍທຸກຢ່າງ. 17ແຕ່ສະຕິປັນຍາທີ່ມາແຕ່ເບື້ອງເທິງນັ້ນ ກ່ອນອື່ນກໍເປັນບໍລິສຸດແລ້ວຈິ່ງປະກອບ
ດ້ວຍຄວາມສະຫງົບສຸກ, ສຸພາບ, ແລະຍອມຟັງງ່າຍ, ເຕັມໄປດ້ວຍຄວາມເມດຕາແລະໃຫ້ຜົນ

ດີ, ບໍ່ເລືອກໜ້າຄົນແລະບໍ່ໜ້າຊື່ໃຈຄົດ. 18ຜູ້ສ້າງສັນຕິສຸກຫວ່ານຢ່າງສັນຕິສຸກ ຈຶ່ງໄດ້ກ່ຽວ
ຄວາມຊອບທຳ.

# ບົດທີ 4

## ການເປັນມິດກັບໂລກ

1ອັນໃດເປັນສາເຫດການຜິດຖຽງກັນ ແລະອັນໃດເປັນສາເຫດຂອງການທະເລາະວິວາດກັນ
ໃນພວກເຈົ້າ ບໍ່ແມ່ນກິເລດຕັນຫາຂອງພວກເຈົ້າຫລື ທີ່ເຮັດໃຫ້ພວກເຈົ້າຕໍ່ສູ້ກັນ. 2ເຈົ້າທັງ-
ຫລາຍຢາກໄດ້ແຕ່ບໍ່ໄດ້ ພວກເຈົ້າຂ້າກັນ, ພວກເຈົ້າເຫິງສາກັນ, ແຕ່ບໍ່ສາມາດຈະໄດ້ ພວກເຈົ້າ
ຜິດຖຽງແລະທະເລາະວິວາດກັນ ພວກເຈົ້າບໍ່ມີເພາະບໍ່ໄດ້ຂໍ. 3ເຈົ້າທັງຫລາຍຂໍແລະບໍ່ໄດ້ຮັບ
ເພາະຂໍຜິດ ເພື່ອຈະເອົາໄປໃຊ້ຕາມກິເລດຕັນຫາຂອງຕົນ.

4ໂອ ຄົນທີ່ຫລິ້ນຊູ້ເອີຍ,[ກ] ພວກເຈົ້າບໍ່ຮູ້ຫລືວ່າການເປັນມິດກັບໂລກກໍຄືການເປັນສັດຕູຕໍ່
ພຣະເຈົ້າ ເຫດສັນນັ້ນຜູ້ໃດຢາກເປັນມິດກັບໂລກ ຜູ້ນັ້ນກໍເປັນສັດຕູຕໍ່ພຣະເຈົ້າ. 5ຫລືເຈົ້າທັງ-
ຫລາຍຄຶດວ່າເປັນການເປົ່າໆ ຫລື ທີ່ພຣະຄຳພີກ່າວວ່າ, "ວິນຍານທີ່ພຣະອົງໄດ້ຊົງບັນດານໃຫ້
ຢູ່ໃນເຮົາທັງຫລາຍກໍປາດຖະໜາຢ່າງແຮງກ້າ." 6ແຕ່ພຣະອົງໄດ້ຊົງປະທານພຣະຄຸນເພີ່ມຂຶ້ນ
ອີກ ເຫດສັນນັ້ນພຣະຄຳພີຈຶ່ງກ່າວວ່າ, "ພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງ ແຕ່ຊົງປະທານພຣະ-
ຄຸນແກ່ຄົນທີ່ຖ່ອມໃຈລົງ." 7ເຫດສັນນັ້ນເຈົ້າທັງຫລາຍຈົ່ງນ້ອມໃຈຍອມຟັງພຣະເຈົ້າ ຈົ່ງຕໍ່ສູ້ກັບ
ມານແລະມັນຈະໜີຈາກພວກເຈົ້າໄປ. 8ເຈົ້າທັງຫລາຍຈົ່ງເຂົ້າໃກ້ພຣະເຈົ້າ ແລະພຣະອົງຈະ
ສະເດັດມາໃກ້ພວກເຈົ້າ ຄົນບາບທັງຫລາຍເອີຍ, ຈົ່ງຊຳລະມືໃຫ້ສະອາດ, ແລະຄົນສອງໃຈຈົ່ງ
ຊຳລະໃຈຂອງຕົນໃຫ້ບໍລິສຸດ. 9ຈົ່ງເປັນທຸກໂສກເສົ້າ, ຈົ່ງຮ້ອງໄຫ້ແລະຮ່ຳໄຮ ໃຫ້ການຫົວຂອງ
ຕົນກັບກາຍເປັນການໂສກເສົ້າ ແລະໃຫ້ຄວາມຍິນດີກັບກາຍເປັນຄວາມເສົ້າໝອງ. 10ເຈົ້າທັງ-
ຫລາຍຈົ່ງຖ່ອມໃຈລົງຕໍ່ພຣະພັກອົງພຣະຜູ້ເປັນເຈົ້າ ແລະພຣະອົງຈະຊົງຍົກຊູພວກເຈົ້າຂຶ້ນ.

## ຢ່າກ່າວໂທດໃສ່ພີ່ນ້ອງ

11ພີ່ນ້ອງທັງຫລາຍເອີຍ, ຢ່າເວົ້ານິນທາເຊິ່ງກັນແລະກັນ ຜູ້ທີ່ເວົ້ານິນທາພີ່ນ້ອງຫລືກ່າວໂທດ
ໃສ່ພີ່ນ້ອງຂອງຕົນ ຜູ້ນັ້ນກໍເວົ້ານິນທາຕໍ່ພຣະບັນຍັດແລະກ່າວໂທດຕໍ່ພຣະບັນຍັດນັ້ນ ແຕ່ຖ້າ
ເຈົ້າກ່າວໂທດຕໍ່ພຣະບັນຍັດ ເຈົ້າກໍບໍ່ເປັນຜູ້ທີ່ຖືຮັກສາພຣະບັນຍັດ ແຕ່ເປັນຜູ້ຕັດສິນພຣະບັນ-
ຍັດ. 12ມີຜູ້ຊົງແຕ່ງຕັ້ງພຣະບັນຍັດ ແລະຜູ້ຊົງພິພາກສາພຽງແຕ່ອົງດຽວເທົ່ານັ້ນແຫລະ, ຄື
ພຣະອົງຜູ້ຊົງສາມາດໂຜດໃຫ້ພົ້ນແລະຊົງສາມາດບັນດານໃຫ້ຈິບຫາຍໄປໄດ້ ແຕ່ຝ່າຍເຈົ້າ,
ເປັນຜູ້ໃດທີ່ຈະກ່າວໂທດໃສ່ເພື່ອນບ້ານຂອງຕົນ.

## ການອວດອ້າງ

13ດັ່ງນັ້ນແຫລະ, ເຈົ້າທັງຫລາຍທີ່ເຄີຍເວົ້າວ່າ, "ມື້ນີ້ຫລືມື້ອື່ນພວກເຮົາຈະເຂົ້າໄປໃນເມືອງ
ນັ້ນເມືອງນີ້, ຈະພັກຢູ່ທີ່ນັ້ນປີໜຶ່ງ, ແລະຈະຄ້າຂາຍເອົາກຳໄລ." 14ແຕ່ພວກເຈົ້າບໍ່ຮູ້ເລື່ອງຂອງ

---

[ກ]ຄຳນີ້ໝາຍເຖິງການທີ່ພຣະຄຳພີເຄີຍປຽບພວກອິສຣາເອນວ່າ ເປັນເໝືອນພັນລະຍາຂອງພຣະເຈົ້າທີ່ປະ
ຖິ້ມພຣະອົງເສຍ (ເຊີຍເບິ່ງ ອຊຢ 54:5; ຢຣຢ 3:20; ຮຊອ 2:2).

ມື້ອື່ນ ວ່າຊີວິດຂອງພວກເຈົ້າຈະເປັນຢ່າງໃດ ກໍເປັນເໝືອນນໍ້າໝອກທີ່ປະກົດຢູ່ຊົ່ວຄາວ ແລ້ວກໍ
ຫາຍໄປ. [15]ແທນທີ່ຈະເວົ້າຢ່າງນັ້ນ ພວກເຈົ້າຄວນເວົ້າວ່າ, "ຖ້າພຣະເຈົ້າຊົງເຫັນຊອບ ພວກ
ເຮົາຈະມີຊີວິດຢູ່ແລະຈະເຮັດສິ່ງນີ້ຫລືສິ່ງນັ້ນ." [16]ແຕ່ວ່າດຽວນີ້ເຈົ້າທັງຫລາຍໂອ້ອວດດ້ວຍ
ຄວາມຖືຕົວ ການໂອ້ອວດຢ່າງນີ້ກໍລ້ວນເປັນແຕ່ຄວາມຊົ່ວ. [17]ເຫດສັນນີ້ຜູ້ໃດຮູ້ວ່າອັນໃດເປັນ
ການດີແລະບໍ່ເຮັດ ຜູ້ນັ້ນຈຶ່ງມີບາບ.

# ບົດທີ 5

## ຄຳເຕືອນຄົນຮັ່ງມີ

[1]ນີ້ແຫລະ, ເຈົ້າທັງຫລາຍຜູ້ຮັ່ງມີເອີຍ ຈົ່ງຮ້ອງໄຫ້ແລະໂອ່ຍຄາງ ຍ້ອນຄວາມທຸກລຳບາກທີ່
ຈະມາຖືກພວກເຈົ້າ. [2]ຄວາມສົມບູນຂອງພວກເຈົ້າກໍເສື່ອມສູນໄປແລ້ວ ຄືເສື້ອຜ້າຂອງພວກເຈົ້າ
ແມງກໍກັດກິນແລ້ວ. [3]ເງິນຄຳຂອງພວກເຈົ້າກໍເກີດຂີ້ໝ້ຽງ ແລະຂີ້ໝ້ຽງນັ້ນຈະເປັນພະຍານຫລັກ
ຖານຕໍ່ສູ້ພວກເຈົ້າ, ຈະເຜົາຜານເລືອດເນື້ອຂອງພວກເຈົ້າເໝືອນໄຟ ພວກເຈົ້າໄດ້ທ້ອນໂຮມຊັບ
ສົມບັດໄວ້ສຳລັບວັນສຸດທ້າຍ. [4]ເບິ່ງແມ, ຄ່າຈ້າງຂອງຄົນທີ່ໄດ້ກ່ຽວເຂົ້າໃນນາຂອງພວກເຈົ້າຊຶ່ງ
ພວກເຈົ້າໄດ້ສໍ້ໂກງໄວ້ນັ້ນ ກໍຮ້ອງຟ້ອງຂຶ້ນ ແລະສຽງຮ້ອງທຸກຂອງຄົນທີ່ກ່ຽວເຂົ້ານັ້ນໄດ້ຊົງຊາບ
ແລ້ວ ເຖິງພຣະກັນຂອງອົງພຣະຜູ້ເປັນເຈົ້າ ຜູ້ຊົງເປັນຈອມພົນ. [5]ພວກເຈົ້າໄດ້ລ້ຽງຊີວິດຢູ່ໃນ
ໂລກຢ່າງຟູມເຟືອຍແລະສະໜຸກສະໜານ ພວກເຈົ້າໄດ້ບຳລຸງຈິດໃຈເໝືອນລໍຖ້າວັນປະຫານ.
[6]ພວກເຈົ້າໄດ້ຕັດສິນລົງໂທດແລະໄດ້ຂ້າຄົນຊອບທຳເສຍ ເຂົາກໍບໍ່ໄດ້ຕໍ່ສູ້ພວກເຈົ້າ.

## ຄວາມອົດທົນແລະການອ້ອນວອນ

[7]ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ, ຈົ່ງມີໃຈອົດທົນຈົນກວ່າອົງພຣະຜູ້ເປັນເຈົ້າຈະສະເດັດ
ມາ ຈົ່ງເບິ່ງ, ຊາວປູກຝັງທີ່ລໍຄອຍຜົນອັນມີຄ່າ ທີ່ຈະໄດ້ຮັບຈາກແຜ່ນດິນເຂົາພຽນຄອຍຈົນກວ່າ
ມີຝົນຕົ້ນລະດູແລະຝົນປາຍລະດູ. [8]ພວກເຈົ້າກໍຈົ່ງອົດທົນຢ່າງນັ້ນເໝືອນກັນ ຈົ່ງຕັ້ງອົກຕັ້ງໃຈ
ໃຫ້ດີ ເພາະໃກ້ຈະເຖິງເວລາທີ່ອົງພຣະຜູ້ເປັນເຈົ້າຈະສະເດັດມາແລ້ວ. [9]ພີ່ນ້ອງທັງຫລາຍເອີຍ,
ຢ່າຈົ່ມຕໍ່ກັນແລະກັນເພື່ອພວກເຈົ້າຈະບໍ່ຖືກຊົງພິພາກສາ ນີ້ແຫລະ, ພຣະອົງຜູ້ຊົງພິພາກສາຊົງ
ປະທັບຢືນຢູ່ທີ່ປະຕູແລ້ວ. [10]ພີ່ນ້ອງທັງຫລາຍເອີຍ, ຈົ່ງເອົາແບບຢ່າງໃນການທົນທຸກແລະ
ຄວາມພາກພຽນຂອງພວກຜູ້ປະກາດພຣະທຳ ຜູ້ໄດ້ກ່າວຄວາມໃນພຣະນາມຂອງອົງພຣະຜູ້-
ເປັນເຈົ້າ. [11]ເບິ່ງແມ, ພວກເຮົາຖືວ່າຄົນເຫລົ່ານັ້ນທີ່ມີຄວາມໝັ້ນໃຈກໍເປັນສຸກ ເຈົ້າທັງຫລາຍໄດ້
ຍິນເລື່ອງຄວາມໝັ້ນໃຈຂອງທ່ານໂຢບ ແລະໄດ້ເຫັນແລ້ວວ່າໃນທີ່ສຸດປາຍນັ້ນ ອົງພຣະຜູ້-
ເປັນເຈົ້າກໍຊົງເຕັມໄປດ້ວຍພຣະເມດຕາກະລຸນາ. [12]ພີ່ນ້ອງທັງຫລາຍຂອງເຮົາເອີຍ, ທີ່ສຳຄັນ
ກວ່າສິ່ງອື່ນໆ ທັງໝົດກໍຄື ຢ່າສະບົດສາບານດ້ວຍອ້າງເຖິງຟ້າ, ຫລືດິນ, ຫລືສິ່ງອື່ນໆ ແຕ່ສິ່ງ
ໃດແມ່ນກໍໃຫ້ວ່າແມ່ນ, ສິ່ງໃດທີ່ບໍ່ແມ່ນກໍໃຫ້ວ່າບໍ່ແມ່ນ, ເພື່ອພວກເຈົ້າຈະບໍ່ຕົກໃນການຊົງລົງ-
ໂທດ.

[13]ມີຜູ້ໃດໃນພວກເຈົ້າທົນທຸກຫລື ຈົ່ງໃຫ້ຜູ້ນັ້ນອ້ອນວອນ ມີຜູ້ໃດຊົມຊື່ນຍິນດີຫລື ໃຫ້ຜູ້ນັ້ນ
ຮ້ອງເພງສັນລະເສີນ. [14]ມີຜູ້ໃດເຈັບໄຂ້ໄດ້ປ່ວຍຫລື ຈົ່ງໃຫ້ຜູ້ນັ້ນເຊີນບັນດາເຖົ້າແກ່ໃນຄຣິສຕະ-

ຈັກມາອ້ອນວອນສຳລັບຕົນ ແລະເອົານ້ຳມັນທາຜູ້ນັ້ນໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ.
15ຄຳອ້ອນວອນທີ່ປະກອບດ້ວຍຄວາມເຊື່ອຈະເຮັດໃຫ້ຜູ້ປ່ວຍນັ້ນລອດພົ້ນ ແລະອົງພຣະຜູ້ເປັນ-
ເຈົ້າຈະຊົງໂຜດໃຫ້ຜູ້ນັ້ນລຸກຂຶ້ນດີເປັນປົກກະຕິແລະຖ້າຜູ້ນັ້ນໄດ້ທຳຜິດເຮັດບາບ ພຣະອົງກໍຈະ
ຊົງໂຜດອະໄພໃຫ້. 16ເຫດສັນນັ້ນເຈົ້າທັງຫລາຍຈົ່ງສາລະພາບຜິດຂອງຕົນຕໍ່ກັນແລະກັນ ຈົ່ງ
ອ້ອນວອນເພື່ອກັນແລະກັນ ເພື່ອເຈົ້າທັງຫລາຍຈະໄດ້ດີພະຍາດ ຄຳອ້ອນວອນຂອງຜູ້ຊອບທຳ
ມີລິດສັກສິດເຮັດໃຫ້ເກີດຜົນ. 17ເອລີຢາກໍເປັນມະນຸດທີ່ມີສະພາບເໝືອນກັບເຮົາທັງຫລາຍເພິ່ນ
ໄດ້ອ້ອນວອນດ້ວຍໃຈຮ້ອນຮົນທູນຂໍບໍ່ໃຫ້ຝົນຕົກແລະຝົນກໍບໍ່ຕົກມາຍັງແຜ່ນດິນເຖິງສາມປີກັບ
ຫົກເດືອນ. 18ແລ້ວເພິ່ນກໍໄດ້ທູນອ້ອນວອນຂໍອີກ ຟ້າກໍປະທານຝົນໃຫ້ ແລະແຜ່ນດິນກໍໄດ້ເກີດ
ຜົນຕ່າງໆ.

19ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຖ້າຄົນໃດໃນພວກເຈົ້າຫລົງຜິດໄປຈາກຄວາມຈິງ, ຖ້າຜູ້
ໃດເຮັດໃຫ້ຄົນນັ້ນຕ່າວຄືນມາອີກ. 20ຈົ່ງຮູ້ວ່າຜູ້ທີ່ເຮັດໃຫ້ຄົນບາບຄົນໜຶ່ງຕ່າວຄືນມາຈາກທາງ
ຜິດຂອງຕົນນັ້ນ ກໍໄດ້ຊ່ອຍຈິດວິນຍານຂອງຄົນນັ້ນໃຫ້ພົ້ນຈາກຄວາມຕາຍ ແລະທັງໃຫ້ຄວາມ
ຜິດບາບຈຳນວນຫລວງຫລາຍໄດ້ຮັບຄວາມອະໄພ.

* * *

# ຈົດໝາຍຂອງ
# ເປໂຕ ສະບັບຕົ້ນ

## ບົດທີ 1

1ເປໂຕ ອັກຄະສາວົກຂອງພຣະເຢຊູຄຣິດຮຽນ ພວກທີ່ຖືກຊົງເລືອກໄວ້ ແລະທີ່ກະຈັດກະ-
ຈາຍໄປເປັນຜູ້ພັກເຊົາໃນແຂວງປົນໂຕ, ແຂວງຄາລາເຕຍ, ແຂວງກາປາໂດເກຍ, ແຂວງອາ-
ເຊຍ ແລະແຂວງບີທີເນຍ. 2ຄືຜູ້ທີ່ພຣະເຈົ້າພຣະບິດາໄດ້ຊົງເລືອກໄວ້ແລ້ວ ຕາມທີ່ພຣະອົງໄດ້
ຊົງຮູ້ລ່ວງໜ້າໄວ້ກ່ອນ ເພື່ອພຣະວິນຍານຈະຊົງຊໍາລະໃຫ້ບໍລິສຸດ, ຈະໃຫ້ນົບນ້ອມເຊື່ອຟັງ
ພຣະເຢຊູຄຣິດ, ແລະຈະໃຫ້ຮັບການຊົດດ້ວຍພຣະໂລຫິດຂອງພຣະອົງ. ຂໍພຣະຄຸນແລະສັນຕິ
ສຸກຈົ່ງບັງເກີດທະວີຄູນແກ່ທ່ານທັງຫລາຍເທີນ.

### ຄວາມຫວັງອັນມີຊີວິດຢູ່

3ສາທຸການແດ່ພຣະເຈົ້າພຣະບິດາແຫ່ງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ, ຜູ້ໄດ້ຊົງ
ພຣະມະຫາກະລຸນາແກ່ພວກເຮົາ, ຊົງໂຜດໃຫ້ພວກເຮົາບັງເກີດໃໝ່ ເຂົ້າສູ່ຄວາມຫວັງໃຈອັນມີ
ຊີວິດຢູ່ ໂດຍການຄືນພຣະຊົນຂອງພຣະເຢຊູຄຣິດ. 4ເພື່ອໃຫ້ໄດ້ຮັບມໍລະດົກຊຶ່ງບໍ່ຮູ້ເປື່ອຍເນົ່າ,
ບໍ່ຖືກຊົ່ວມົວໝອງ, ແລະຫ່ຽວແຫ້ງໄປບໍ່ໄດ້ ຊຶ່ງໄດ້ຮັກສາໄວ້ໃນມະຫາສະຫວັນເພື່ອທ່ານທັງ-
ຫລາຍ. 5ຊຶ່ງເປັນຜູ້ທີ່ລິດເດດຂອງພຣະເຈົ້າຊົງເຝົ້າຮັກສາໄວ້ດ້ວຍຄວາມເຊື່ອ ຈົນໄດ້ເຖິງ
ຄວາມພົ້ນຊຶ່ງພ້ອມແລ້ວທີ່ຈະປະກົດໃນເວລາສຸດທ້າຍ. 6ໃນສິ່ງນີ້ແຫລະ, ຈົ່ງຊົມຊື່ນຍິນດີຫລາຍ
ເຖິງແມ່ນວ່າດຽວນີ້ຈໍາເປັນທີ່ພວກທ່ານຈະຕ້ອງທົນຄວາມທຸກໂສກ ດ້ວຍການຖືກທົດລອງ
ຕ່າງໆ ໃນຊົ່ວເວລາໜຶ່ງ. 7ເຖິງແມ່ນວ່າຄໍາກໍຍັງຖືກລອງເບິ່ງດ້ວຍໄຟ ແຕ່ຄວາມເຊື່ອທີ່ຖືກລອງ
ກໍປະເສີດກວ່າຄໍາທີ່ຍ່ອມຮູ້ສູນຫາຍໄປ ດັ່ງນັ້ນການທົດລອງຕ່າງໆ ກໍເກີດຂຶ້ນເພື່ອໃຫ້ຄວາມ
ເຊື່ອທີ່ລອງແລ້ວນັ້ນ ປະກົດວ່າຄວນຮັບຄວາມສັນລະເສີນ, ສະຫງ່າລາສີ, ແລະກຽດຕິຍົດ ໃນ
ເວລາທີ່ພຣະເຢຊູຄຣິດຈະສະເດັດມາປະກົດ. 8ພຣະອົງຜູ້ທີ່ທ່ານຍັງບໍ່ໄດ້ເຫັນ ແຕ່ພວກທ່ານກໍ
ຍັງຮັກພຣະອົງຢູ່ ເຖິງແມ່ນວ່າຂະນະນີ້ພວກທ່ານບໍ່ເຫັນພຣະອົງ ແຕ່ຍັງເຊື່ອແລະຊື່ນຊົມຍິນດີ
ດ້ວຍຄວາມຍິນດີອັນຮຸ່ງເຮືອງ ຊຶ່ງເຫລືອທີ່ຈະອະທິບາຍໄດ້. 9ແລ້ວທ່ານທັງຫລາຍຈຶ່ງໄດ້ຮັບ
ຕາມຈຸດປະສົງແຫ່ງຄວາມເຊື່ອຂອງພວກທ່ານ ຄືວິນຍານຈິດຂອງພວກທ່ານຈະໄດ້ລອດພົ້ນ.

10ບັນດາຜູ້ປະກາດພຣະທໍາຜູ້ໄດ້ທໍານວາຍເຖິງພຣະຄຸນ ຊຶ່ງຈະບັງເກີດແກ່ທ່ານທັງຫລາຍ ກໍ
ໄດ້ຄົ້ນຄວ້າແລະສືບຖາມຫາຢ່າງຖ້ວນຖີ່ກ່ຽວກັບເລື່ອງຄວາມພົ້ນນີ້. 11ເຂົາໄດ້ສືບຄົ້ນຫາວ່າ
ພຣະວິນຍານຂອງພຣະຄຣິດຜູ້ຊົງສະຖິດຢູ່ໃນເຂົາ ໄດ້ຊົງບົ່ງໄວ້ເຖິງຄາວໃດແລະເວລາຢ່າງ-
ໃດ ເມື່ອພຣະອົງຊົງທໍານວາຍໄວ້ເຖິງຄວາມທຸກທໍລະມານຂອງພຣະຄຣິດ ແລະເຖິງສະຫງ່າ
ລາສີທີ່ຈະມາພາຍຫລັງຄວາມທຸກທໍລະມານນັ້ນ. 12ກໍຊົງສະແດງໃຫ້ພວກຜູ້ປະກາດພຣະທໍານັ້ນ
ຊາບວ່າ ທີ່ເຂົາເຫລົ່ານັ້ນໄດ້ປະຕິບັດໃນເຫດການທັງປວງນັ້ນ ບໍ່ແມ່ນສໍາລັບເຂົາເອງ ແຕ່ສໍາ-

ລັບທ່ານທັງຫລາຍ ບັດນີ້ຄົນທີ່ໄດ້ປະກາດຂ່າວປະເສີດແກ່ທ່ານທັງຫລາຍໄດ້ກ່າວສິ່ງເຫລົ່ານັ້ນ
ແກ່ພວກທ່ານແລ້ວ ໂດຍພຣະວິນຍານບໍລິສຸດຜູ້ຊົງຮັບໃຊ້ມາຈາກສະຫວັນ ເຫດການເຫລົ່ານີ້
ເປັນສິ່ງຊຶ່ງພວກເທວະດາປາດຖະໜາຈະພິຈາລະນາເບິ່ງ.

## ຊົງບັນຊາໃຫ້ດຳເນີນຊີວິດຢ່າງບໍລິສຸດ

[13]ເຫດສັນນັ້ນຈົ່ງຕຽມຕົວຕຽມໃຈຂອງພວກທ່ານໃຫ້ດີ ຈົ່ງມີສະຕິລະວັງຕົວ ແລະຈົ່ງຕັ້ງ
ຄວາມຫວັງໃຫ້ເຕັມບໍລິບູນໃນພຣະຄຸນ ຄືພຣະຄຸນຊຶ່ງຈະຊົງໂຜດປະທານແກ່ພວກທ່ານ ເມື່ອ
ພຣະເຢຊູຈະສະເດັດມາປະກົດ. [14]ໂດຍທີ່ພວກທ່ານເປັນລູກທີ່ຟັງຄວາມ ຢ່າໄດ້ດຳເນີນຊີວິດ
ຕາມກິເລດຕັນຫາແບບເກົ່າ ຢ່າງເມື່ອພວກທ່ານຍັງໂງ່ຢູ່. [15]ແຕ່ເພາະພຣະອົງຜູ້ຊົງເອີ້ນທ່ານ
ທັງຫລາຍນັ້ນບໍລິສຸດ ຝ່າຍພວກທ່ານ, ຈົ່ງກາຍເປັນຜູ້ບໍລິສຸດໃນກິລິຍາອາຈາທຸກປະການເໝືອນ
ກັນ. [16]ເພາະມີຄຳຂຽນໄວ້ແລ້ວວ່າ, “ເຈົ້າທັງຫລາຍຈົ່ງເປັນບໍລິສຸດ ເພາະຝ່າຍເຮົາບໍລິສຸດ.”
[17]ແລະຖ້າພວກທ່ານອ້ອນວອນທູນຂໍຕໍ່ພຣະອົງ ຜູ້ຊົງພິພາກສາທຸກຄົນຕາມກິເລດຂອງເຂົາໂດຍ
ບໍ່ເລືອກໜ້າຜູ້ໃດ ເຖິງແມ່ນວ່າພວກທ່ານເອີ້ນພຣະອົງວ່າ “ພຣະບິດາ” ກໍຕາມ ຈົ່ງປະຕິບັດໄປ
ດ້ວຍຄວາມຢຳເກງຕະຫລອດເວລາທີ່ພວກທ່ານອາໃສຢູ່ໃນໂລກນີ້. [18]ທ່ານທັງຫລາຍຮູ້ແລ້ວວ່າ
ພຣະອົງຊົງໄຖ່ພວກທ່ານອອກຈາກການດຳເນີນຊີວິດອັນບໍ່ມີປະໂຫຍດ ຊຶ່ງພວກທ່ານໄດ້ຮັບຕໍ່
ຈາກບັນພະບຸລຸດຂອງພວກທ່ານ ບໍ່ແມ່ນໄຖ່ໄວ້ດ້ວຍສິ່ງຂອງທີ່ເສື່ອມສູນໄປ ຄືເງິນຫລືຄຳ.
[19]ແຕ່ຊົງໄຖ່ດ້ວຍພຣະໂລຫິດອັນຊົງມີຄ່າຂອງພຣະຄຣິດ ເໝືອນດັ່ງເລືອດລູກແກະທີ່ບໍ່ມີຕຳໜິ
ຫລືຮອຍດ່າງ. [20]ພຣະເຈົ້າໄດ້ຊົງກຳນົດພຣະຄຣິດນັ້ນໄວ້ກ່ອນຊົງສ້າງໂລກ ແຕ່ໄດ້ຊົງໃຫ້
ພຣະອົງປະກົດໃນເວລາສຸດທ້າຍນີ້ເພື່ອທ່ານທັງຫລາຍ. [21]ເພາະດ້ວຍພຣະຄຣິດນັ້ນ ພວກທ່ານ
ຈົ່ງວາງໃຈເຊື່ອໃນພຣະເຈົ້າ, ຜູ້ຊົງບັນດານໃຫ້ພຣະຄຣິດເປັນຄືນມາຈາກຕາຍ, ແລະຊົງປະ-
ທານສະຫງ່າລາສີໃຫ້ແກ່ພຣະອົງ ຈົນກວ່າຄວາມເຊື່ອແລະຄວາມຫວັງໃຈຂອງພວກທ່ານຈົ່ງຕັ້ງ
ຢູ່ໃນພຣະເຈົ້າ.

[22]ທີ່ທ່ານທັງຫລາຍໄດ້ຊຳລະຈິດໃຈຂອງຕົນໃຫ້ບໍລິສຸດດ້ວຍຄວາມເຊື່ອຟັງຄວາມຈິງຈົນມີ
ຄວາມຮັກພວກພີ່ນ້ອງຢ່າງຈິງໃຈ, ພວກທ່ານຈົ່ງຮັກເຊິ່ງກັນແລະກັນດ້ວຍເຕັມໃຈ. [23]ດ້ວຍວ່າ
ທ່ານທັງຫລາຍໄດ້ເກີດໃໝ່ແລ້ວ ບໍ່ແມ່ນເກີດຈາກແນວປູກທີ່ອາດເປື່ອຍເນົ່າ ແຕ່ເກີດຈາກແນວ
ປູກທີ່ບໍ່ອາດເປື່ອຍເນົ່າ ຄືເກີດຈາກພຣະທຳຂອງພຣະເຈົ້າອັນຊົງຊີວິດແລະຕັ້ງໝັ້ນຄົງ.
[24]ເພາະວ່າ,

“ບັນດາມະນຸດທັງໝົດເປັນເໝືອນຕົ້ນຫຍ້າ
ແລະບັນດາສະຫງ່າລາສີຂອງເຂົາກໍເປັນເໝືອນດອກຫຍ້າ
ຕົ້ນຫຍ້າກໍຫ່ຽວແຫ້ງໄປ ແລະດອກມັນກໍຫ່ວງຫລົ່ນໄປ.

[25]ແຕ່ພຣະທຳຂອງອົງພຣະຜູ້ເປັນເຈົ້າຕັ້ງໝັ້ນຄົງຢູ່ເປັນນິດ” ພຣະທຳນັ້ນຄືຂ່າວປະເສີດທີ່ໄດ້
ປະກາດໃຫ້ພວກທ່ານຊາບແລ້ວ.

# ບົດທີ 2

## ສີລາທີ່ຊົງຊີວິດແລະຊົນຊາດບໍລິສຸດ

1ເຫດສັນນັ້ນທ່ານທັງຫລາຍຈົ່ງລະຖິ້ມຄວາມຄຶດຮ້າຍທັງປວງ, ກົນອຸບາຍທຸກຢ່າງ, ການໜ້າ
ຊື່ໃຈຄົດ, ຄວາມອິດສາ ແລະຄຳເວົ້ານິນທາທັງໝົດ. 2ເໝືອນເດັກນ້ອຍໆ ທີ່ເກີດໃໝ່ ຈົ່ງ
ຮ້ອນໃຈປາດຖະໜາຫານ້ຳນົມອັນບໍລິສຸດຝ່າຍວິນຍານ ເພື່ອດ້ວຍນ້ຳນົມນັ້ນຈະເຮັດໃຫ້ພວກ
ທ່ານຈະເລີນຂຶ້ນເຖິງຄວາມພົ້ນ. 3ເພາະພວກທ່ານໄດ້ຊີມລົດຮູ້ແລ້ວວ່າ ອົງພຣະຜູ້ເປັນເຈົ້າຊົງ
ປະກອບດ້ວຍພຣະກະລຸນາຄຸນ.

4ຈົ່ງມາຫາພຣະອົງຜູ້ຊົງເປັນພຣະສີລາທີ່ຊົງຊີວິດ ຊຶ່ງຝ່າຍມະນຸດໄດ້ປະຖິ້ມເສຍ ແຕ່ຝ່າຍ
ພຣະເຈົ້າຊົງເລືອກໄວ້ແລະຊົງຖືວ່າມີຄ່າ. 5ທ່ານທັງຫລາຍກໍເປັນເໝືອນຫີນທີ່ມີຊີວິດຢູ່ ພວກ
ທ່ານຈົ່ງຍອມໃຫ້ພຣະເຈົ້າຊົງກໍ່ຂຶ້ນເປັນພຣະວິຫານຝ່າຍວິນຍານ, ເປັນປະໂລຫິດບໍລິສຸດເພື່ອ
ຖວາຍເຄື່ອງບູຊາຝ່າຍວິນຍານ ຊຶ່ງຊອບພຣະໄທຂອງພຣະເຈົ້າ ໂດຍທາງພຣະເຢຊູຄຣິດ.
6ເພາະມີຄຳຂຽນໄວ້ໃນພຣະຄຳພີແລ້ວວ່າ,

"ເບິ່ງແມ, ເຮົາວາງຫີນກ້ອນໜຶ່ງລົງໃນເມືອງຊີໂອນ
ເປັນຫີນເສົາເອກທີ່ເລືອກໄວ້ແລ້ວ ແລະເປັນຫີນທີ່ມີຄ່າອັນປະເສີດ
ຜູ້ທີ່ວາງໃຈໃນຫີນນັ້ນກໍຈະບໍ່ໄດ້ຮັບຄວາມອັບອາຍຈັກເທື່ອ."

7ຄ່າປະເສີດນັ້ນມີສຳລັບທ່ານທັງຫລາຍທີ່ວາງໃຈເຊື່ອ ແຕ່ສຳລັບຄົນທັງຫລາຍທີ່ບໍ່ເຊື່ອນັ້ນ,

"ຫີນທີ່ຊ່າງກໍ່ຖິ້ມເສຍແລ້ວຫີນນັ້ນແຫລະ, ໄດ້ກັບກາຍມາເປັນຫີນເສົາເອກ."

8ແລະ,

"ເປັນຫີນທີ່ເຮັດໃຫ້ຕຳສະດຸດແລະເປັນຫີນທີ່ເຮັດໃຫ້ສະດຸດລົ້ມ"

ທີ່ເຂົາສະດຸດນັ້ນກໍເພາະເຂົາບໍ່ເຊື່ອຟັງພຣະທຳ ເຂົາກໍຖືກຊົງກຳນົດໄວ້ສຳລັບການນີ້ແຫລະ.
9ແຕ່ຝ່າຍທ່ານທັງຫລາຍເປັນຊາດທີ່ພຣະເຈົ້າຊົງເລືອກໄວ້ແລ້ວ, ເປັນປະໂລຫິດຫລວງ, ເປັນ
ປະຊາຊາດບໍລິສຸດ, ເປັນພົນລະເມືອງຂອງພຣະເຈົ້າເອງ ເພື່ອທ່ານທັງຫລາຍຈະໄດ້ປະກາດ
ພຣະບາລະມີຂອງພຣະອົງ ຜູ້ໄດ້ຊົງເອີ້ນພວກທ່ານໃຫ້ອອກມາຈາກຄວາມມືດ ເຂົ້າໄປສູ່ຄວາມ
ສະຫວ່າງອັນມະຫັດສະຈັນຂອງພຣະອົງ. 10ຄືເມື່ອກ່ອນນັ້ນທ່ານທັງຫລາຍບໍ່ມີຊາດ ແຕ່ບັດນີ້
ເປັນພົນລະເມືອງຂອງພຣະເຈົ້າ ເມື່ອກ່ອນພວກທ່ານບໍ່ໄດ້ຮັບພຣະກະລຸນາ ແຕ່ບັດນີ້ພວກທ່ານ
ໄດ້ຮັບພຣະກະລຸນາແລ້ວ.

## ດຳເນີນຊີວິດເໝືອນເປັນຂ້ອຍຂ້າຂອງພຣະເຈົ້າ

11ທ່ານທີ່ຮັກທັງຫລາຍເອີຍ, ຂ້າພະເຈົ້າຂໍເຕືອນສະຕິພວກທ່ານ ເໝືອນເປັນຄົນຕ່າງຊາດທີ່
ທ່ອງທ່ຽວໃນໂລກນີ້ ໃຫ້ງົດເວັ້ນຈາກຕັນຫາແນວມະນຸດ ຊຶ່ງທຳເສິກຕໍ່ສູ້ຈິດວິນຍານ. 12ຈົ່ງດຳ-
ເນີນຊີວິດອັນດີຖ້າມກາງຄົນຕ່າງຊາດ ເພື່ອໃນກໍລະນີທີ່ເຂົາຕິຕຽນນິນທາພວກທ່ານວ່າເປັນຄົນ
ເຮັດຊົ່ວນັ້ນ ເຂົາກໍຈະສັນລະເສີນພຣະເຈົ້າໃນວັນທີ່ພຣະອົງສະເດັດມາ ເພາະເຂົາໄດ້ແລເຫັນ
ການດີທີ່ພວກທ່ານປະຕິບັດນັ້ນ.

13ເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ທ່ານທັງຫລາຍຈົ່ງຍອມຢູ່ໃຕ້ຂໍ້ບັງຄັບທີ່ມະນຸດຕັ້ງໄວ້ທຸກ

ຢ່າງ ບໍ່ວ່າຜູ້ນັ້ນຈະເປັນມະຫາກະສັດຜູ້ສູງສຸດ. [14]ຫລືຈະເປັນຜູ້ປົກຄອງທີ່ໄດ້ຮັບສັ່ງຈາກພຣະ-
ມະຫາກະສັດນັ້ນ ໃຫ້ລົງໂທດຜູ້ທີ່ເຮັດຊົ່ວ ແລະຍົກຍ້ອງຜູ້ທີ່ເຮັດດີ. [15]ເພາະນໍ້າພຣະໄທຂອງ
ພຣະເຈົ້າ ເປັນດັ່ງນີ້ແຫລະ, ຄືດ້ວຍເຮັດການດີດັ່ງນັ້ນ ພວກທ່ານຈະໄດ້ລະງັບຄວາມໂງ່ຂອງຄົນ
ທີ່ບໍ່ມີສະຕິໃຫ້ມິດເສຍ. [16]ຈົ່ງດຳເນີນຊີວິດຢ່າງຄົນມີເສລີພາບ ແຕ່ຢ່າໃຊ້ເສລີພາບນັ້ນເປັນຂໍ້
ອ້າງເພື່ອເຮັດຄວາມຊົ່ວ ແຕ່ຈົ່ງດຳເນີນຊີວິດເໝືອນເປັນຂ້ອຍຂ້າຂອງພຣະເຈົ້າ. [17]ຈົ່ງໃຫ້ກຽດ
ແກ່ທຸກຄົນ ຈົ່ງຮັກບັນດາພີ່ນ້ອງ ຈົ່ງຢຳເກງພຣະເຈົ້າ ແລະຈົ່ງຖວາຍກຽດແດ່ມະຫາກະສັດ.

## ພຣະເຢຊູຊົງທົນທຸກທໍລະມານເປັນຕົວຢ່າງ

[18]ທ່ານທັງຫລາຍທີ່ເປັນຜູ້ຮັບໃຊ້ເອີຍ, ຈົ່ງຍອມຟັງນາຍຂອງຕົນດ້ວຍຄວາມໂຄລົບທຸກຢ່າງ
ບໍ່ແມ່ນແຕ່ນາຍທີ່ເປັນຄົນໃຈດີສຸພາບເທົ່ານັ້ນ ແຕ່ທັງນາຍທີ່ໂຫດຮ້າຍເໝືອນກັນ. [19]ຖ້າຜູ້ໃດ
ຍອມຮັບຄວາມທຸກທໍລະມານອັນບໍ່ເປັນທຳເພາະເຫັນແກ່ພຣະເຈົ້າ ນັ້ນແຫລະ, ເປັນການຊອບ.
[20]ເພາະຖ້າພວກທ່ານເຮັດການຊົ່ວ ແລະອົດທົນເອົາການຂ້ຽນຕີເພາະເຮັດຊົ່ວ ຈະເປັນການດີ
ການຊອບຢ່າງໃດ ແຕ່ຖ້າພວກທ່ານເຮັດການດີແລະອົດທົນເອົາຄວາມທຸກທໍລະມານເພາະການ
ດີນັ້ນ ດັ່ງນັ້ນແຫລະ, ເປັນການຊອບຕໍ່ພຣະພັກພຣະເຈົ້າ. [21]ເພາະວ່າພຣະເຈົ້າໄດ້ຊົງເອີ້ນ
ພວກທ່ານໄວ້ສຳລັບການນີ້ແຫລະ ເພາະພຣະຄຣິດກໍໄດ້ຊົງທົນທຸກທໍລະມານແທນທ່ານທັງ-
ຫລາຍເໝືອນກັນ ໂດຍໃຫ້ເປັນແບບຢ່າງແກ່ພວກທ່ານ ເພື່ອພວກທ່ານຈະໄດ້ຕິດຕາມຮອຍ
ພຣະບາດຂອງພຣະອົງ. [22]"ພຣະອົງບໍ່ໄດ້ຊົງເຮັດບາບຈັກປະການ ແລະຄຳອຸບາຍໃນພຣະໂອດ
ຂອງພຣະອົງກໍຊອກບໍ່ພົບ". [23]ເມື່ອເຂົາກ່າວຄຳຫຍາບຊ້າຕໍ່ພຣະອົງ ພຣະອົງກໍບໍ່ໄດ້ຊົງກ່າວຄຳ
ຫຍາບຊ້າຕອບ ເມື່ອພຣະອົງຊົງທົນທຸກທໍລະມານ ພຣະອົງກໍບໍ່ໄດ້ຂູ່ເຂັນ ແຕ່ຊົງມອບເລື່ອງ
ຂອງພຣະອົງໄວ້ກັບພຣະເຈົ້າ ຜູ້ຊົງພິພາກສາຢ່າງຍຸດຕິທຳ. [24]ໃນພຣະກາຍຂອງພຣະອົງເອງ
ພຣະອົງໄດ້ຊົງຮັບແບກບາບຂອງພວກເຮົາໄປເຖິງຕົ້ນໄມ້ນັ້ນ ເພື່ອພວກເຮົາຈະໄດ້ຕາຍເສຍ
ຝ່າຍການບາບແລະມີຊີວິດຝ່າຍຄວາມຊອບທຳ ດ້ວຍບາດແຜຂອງພຣະອົງ ທ່ານທັງຫລາຍກໍດີ
ປົກກະຕິແລ້ວ. [25]ເພາະວ່າທ່ານທັງຫລາຍເປັນເໝືອນແກະທີ່ຫລົງທາງໄປ ແຕ່ບັດນີ້ໄດ້ຕ່າວຄືນ
ມາຫາພຣະຜູ້ລ້ຽງແລະຜູ້ດູແລຈິດວິນຍານຂອງທ່ານທັງຫລາຍແລ້ວ.

# ບົດທີ 3

## ການປະຕິບັດລະບຽບລະຫວ່າງພັນລະຍາສາມີ

[1]ຝ່າຍທ່ານທັງຫລາຍຜູ້ເປັນພັນລະຍາກໍເໝືອນກັນ ຈົ່ງຍອມຟັງສາມີຂອງຕົນ ເພື່ອວ່າຖ້າສາ-
ມີຜູ້ໃດບໍ່ເຊື່ອຟັງພຣະທຳຂອງພຣະເຈົ້າ ການປະຕິບັດຂອງພັນລະຍາກໍອາດຈະຈູງໃຈສາມີໄດ້
ໂດຍບໍ່ຕ້ອງເວົ້າຈັກຄຳ. [2]ຄືເມື່ອສາມີຈະໄດ້ແລເຫັນການປະຕິບັດອັນບໍລິສຸດແລະອ່ອນນ້ອມ
ຂອງພວກທ່ານຜູ້ເປັນພັນລະຍາ. [3]ການປະດັບຕົກແຕ່ງກາຍນັ້ນ ຢ່າໃຫ້ເປັນການປະດັບຕົກ-
ແຕ່ງພາຍນອກ ຄືການຖັກຜົມ, ໃສ່ເຄື່ອງຄຳ, ແລະເຄື່ອງນຸ່ງ. [4]ແຕ່ໃຫ້ເປັນການປະດັບທີ່ຊ້ອນ
ໄວ້ໃນຈິດໃຈ ແຕ່ງດ້ວຍເຄື່ອງປະດັບທີ່ບໍ່ຮູ້ເສື່ອມສູນ ຄືດ້ວຍຈິດໃຈອ່ອນສຸພາບແລະສະຫງົບ
ຊຶ່ງເປັນສິ່ງທີ່ມີຄ່າສູງໃນສາຍພຣະເນດຂອງພຣະເຈົ້າ. [5]ເຫດວ່າບັນດາແມ່ຍິງຜູ້ມີສິນທຳໃນເຊັ່ນ

ບູຮານຜູ້ຊຶ່ງມີຄວາມຫວັງໃນ ພຣະເຈົ້າ ໄດ້ຕົກແຕ່ງກາຍຢ່າງນັ້ນ ໂດຍໄດ້ຍອມຟັງສາມີຂອງ
ຕົນ. [6]ເໝືອນຢ່າງນາງຊາຣາໄດ້ຍອມຟັງອັບລາຮາມແລະເອີ້ນທ່ານວ່າ "ນາຍ" ຖ້າພວກທ່ານ
ເຮັດດີ ບໍ່ຕົກໃຈກົວຕໍ່ສິ່ງໃດ ພວກທ່ານກໍກາຍເປັນລູກຫລານຂອງນາງແລ້ວ. [7]ທ່ານທັງຫລາຍທີ່
ເປັນສາມີກໍເໝືອນກັນ, ຈົ່ງຢູ່ກິນກັບພັນລະຍາດ້ວຍເຂົ້າໃຈວ່ານາງເປັນເພດອ່ອນແອກວ່າ ຈົ່ງ
ນັບຖືພັນລະຍາເໝືອນເປັນຜູ້ຮ່ວມກັນຮັບພຣະຄຸນແຫ່ງຊີວິດເປັນມໍລະດົກ ເພື່ອບໍ່ໃຫ້ສິ່ງໜຶ່ງສິ່ງ
ໃດຂັດຂວາງຄວາມອ້ອນວອນຂອງພວກທ່ານ.

## ຍອມທົນທຸກຍ້ອນເຮັດການດີ

[8]ໃນທີ່ສຸດນີ້ພວກທ່ານທຸກຄົນຈົ່ງເປັນນ້ຳໜຶ່ງໃຈດຽວກັນ ຈົ່ງເຫັນອົກເຫັນໃຈກັນຈົ່ງຮັກກັນ
ເໝືອນພີ່ນ້ອງຮ່ວມທ້ອງ ຈົ່ງມີຈິດໃຈເອັນດູແລະຖ່ອມລົງ. [9]ຢ່າຮ້າຍຕອບແທນການຮ້າຍ ຢ່າດ່າ
ຕອບແທນການດ່າ ແຕ່ກົງກັນຂ້າມ, ຈົ່ງອວຍພອນແກ່ເຂົາ ດ້ວຍວ່າພຣະອົງຊົງເອີ້ນພວກທ່ານ
ໃຫ້ເຮັດການຢ່າງນີ້ແຫລະ ເພື່ອພວກທ່ານຈະໄດ້ຮັບພຣະພອນມາເປັນມໍລະດົກ. [10]ເພາະວ່າ,

"ຜູ້ທີ່ຢາກຮັບຊີວິດອັນດີ
  ແລະປາດຖະໜາທີ່ຈະເຫັນວັນສະໜຸກ
ກໍໃຫ້ຜູ້ນັ້ນຫ້າມລີ້ນຂອງຕົນ ບໍ່ໃຫ້ເວົ້າຄວາມຊົ່ວ
  ແລະຫ້າມປາກ ບໍ່ໃຫ້ກ່າວຄຳອຸບາຍລໍ້ລວງ.
[11] ຈົ່ງໃຫ້ຜູ້ນັ້ນເວັ້ນໜີຈາກການຊົ່ວແລະເຮັດການດີ
  ຈົ່ງໃຫ້ຜູ້ນັ້ນສະແຫວງຫາສັນຕິສຸກແລະພະຍາຍາມຕິດຕາມໄປ."
[12] "ພຣະເນດຂອງອົງ ພຣະຜູ້ເປັນເຈົ້າ ຊົງເຝົ້າເບິ່ງຄົນຊອບທຳ
  ແລະພຣະອົງກໍຊົງຮັບຟັງຄຳອ້ອນວອນຂອງເຂົາ
ແຕ່ພຣະພັກຂອງພຣະອົງຊົງຕໍ່ສູ້ບັນດາຄົນທີ່ເຮັດການຊົ່ວ."

[13]ຖ້າທ່ານທັງຫລາຍກາຍເປັນຄົນໝັ້ນໃຈເຮັດການດີ ໃຜໜໍຈະເຮັດຮ້າຍແກ່ທ່ານ. [14]ແຕ່ເຖິງ
ແມ່ນວ່າທ່ານທັງຫລາຍທົນທຸກເພາະໄດ້ເຮັດການຊອບທຳ ພວກທ່ານກໍເປັນສຸກ ແຕ່ຢ່າຊູ່ຢ້ານ
ການທີ່ເຂົາເຮັດໃຫ້ພວກທ່ານສະດຸ້ງຕົກໃຈນັ້ນ ແລະຢ່າວິຕົກກັງວົນ. [15]ແຕ່ໃນໃຈຂອງທ່ານທັງ-
ຫລາຍ, ຈົ່ງໂຄລົບນັບຖືພຣະຄຣິດວ່າເປັນອົງ ພຣະຜູ້ເປັນເຈົ້າ ຈົ່ງມີໃຈພ້ອມຢູ່ສະເໝີ ເພື່ອ
ພວກທ່ານຈະສາມາດຕອບແກ້ຕົວໄດ້ຕໍ່ທຸກຄົນທີ່ຖາມພວກທ່ານວ່າ ທ່ານມີເຫດຜົນປະການໃດ
ຈຶ່ງມີຄວາມຫວັງຢ່າງນີ້. [16]ແຕ່ຈົ່ງຕອບດ້ວຍໃຈສຸພາບແລະຢຳເກງ ແລະໃຫ້ມີໃຈສຳນຶກຜິດແລະ
ຊອບອັນເສາະໃສເພື່ອວ່າ, ເມື່ອພວກທ່ານຖືກປະໝາດນິນທາ ຄົນທີ່ກ່າວຫຍາບຊ້າຕໍ່ທຳນຽມ
ຄຣິສະຕຽນອັນດີຂອງພວກທ່ານນັ້ນ ກໍຈະໄດ້ຮັບຄວາມອັບອາຍ. [17]ເພາະວ່າຖ້ານ້ຳພຣະໄທ
ຂອງ ພຣະເຈົ້າ ຊົງເຫັນດີໃຫ້ພວກທ່ານທົນທຸກຍ້ອນເຮັດການດີ ກໍດີກວ່າຕ້ອງທົນທຸກຍ້ອນເຮັດ
ການຊົ່ວ.

[18]ດ້ວຍວ່າ ພຣະຄຣິດ ກໍເໝືອນກັນ, ໄດ້ສິ້ນພຣະຊົນເທື່ອດຽວເປັນການສິ້ນສຸດ ເພື່ອແທນ
ຄວາມຜິດບາບ ຄືພຣະອົງຜູ້ຊອບທຳແທນຜູ້ບໍ່ຊອບທຳ ເພື່ອຈະໄດ້ນຳເຮົາທັງຫລາຍໄປເຖິງ
ພຣະເຈົ້າ ຝ່າຍກາຍພຣະອົງຊົງຖືກປະຫານເສຍ ແຕ່ຝ່າຍວິນຍານພຣະອົງຖືກຊົງບັນດານໃຫ້

ຄືນພຣະຊົນ. 19ແລະໂດຍທາງວິນຍານນັ້ນພຣະອົງໄດ້ສະເດັດໄປປະກາດແກ່ບັນດາວິນຍານ ທີ່
ຖືກຄຸກຢູ່.
20ຊຶ່ງເມື່ອກ່ອນນັ້ນບໍ່ໄດ້ຍອມເຊື່ອຟັງພຣະເຈົ້າ ຄືເມື່ອພຣະເຈົ້າຊົງສະແດງຄວາມອົດທົນດົນ
ນານໃນສະໄໝຂອງໂນອາ ຂະນະທີ່ທ່ານກຳລັງສ້າງນາວາຢູ່ ໃນນາວາມີຄົນຈຳນວນນ້ອຍ ຄື
ແປດຄົນ ທີ່ໄດ້ຜ່ານພົ້ນນ້ຳຖ້ວມນັ້ນ. 21ນ້ຳນັ້ນໝາຍເຖິງພິທີບັບຕິສະມາທີ່ໃຫ້ພວກທ່ານລອດ
ພົ້ນດຽວນີ້ ບັບຕິສະມານີ້ບໍ່ແມ່ນການຊຳລະສິ່ງເປື້ອນເປິທາງຮ່າງກາຍ ແຕ່ເປັນການຮຽນຂໍຕໍ່
ພຣະເຈົ້າດ້ວຍໃຈສຳນຶກຜິດແລະຊອບອັນເສາະໃສ ບັບຕິສະມານີ້ໃຫ້ເຖິງທີ່ພົ້ນ ເພາະດ້ວຍການ
ທີ່ພຣະເຢຊູຄຣິດຊົງເປັນຄືນມາຈາກຕາຍ. 22ຜູ້ໄດ້ສະເດັດເຂົ້າໃນມະຫາສະຫວັນ ແລະຊົງສະ-
ຖິດຢູ່ເບື້ອງຂວາພຣະຫັດຂອງພຣະເຈົ້າ ໂດຍມີຝູງເທວະດາແລະບັນດາຜູ້ມີອຳນາດແລະລິດ-
ເດດຖືກຊົງມອບໄວ້ໃຫ້ຢູ່ໃຕ້ອຳນາດຂອງພຣະອົງແລ້ວ.

# ບົດທີ 4

## ຜູ້ຮັບມອບໝາຍທີ່ດີແຫ່ງພຣະຄຸນ

1ສັນນັ້ນໂດຍເຫດທີ່ພຣະຄຣິດໄດ້ຊົງທົນທຸກທໍລະມານທາງພຣະກາຍແລ້ວ ທ່ານທັງຫລາຍກໍ
ຈົ່ງມີຄວາມຄຶດຢ່າງດຽວກັນນັ້ນເປັນເຄື່ອງອາວຸດເໝືອນກັນ ເພາະວ່າຜູ້ທີ່ທົນທຸກທໍລະມານທາງ
ກາຍກໍໄດ້ຢຸດເສຍຈາກການຜິດບາບ. 2ເພື່ອຈະບໍ່ດຳເນີນຊີວິດທີ່ຍັງເຫລືອຢູ່ໃນໂລກຕາມຄວາມ
ປາດຖະໜາຂອງມະນຸດ ແຕ່ດຳເນີນໄປຕາມນ້ຳພຣະໄທຂອງພຣະເຈົ້າ. 3ດ້ວຍວ່າຄາວທີ່ລ່ວງ
ພົ້ນໄປແລ້ວນັ້ນ ທີ່ໄດ້ເຮັດຕາມໃຈຊອບຂອງຄົນຕ່າງຊາດ ກໍພຽງພໍແລ້ວ ຄືຄາວເມື່ອໄດ້ເຮັດ
ຕາມລາຄະຕັນຫາ, ຕາມໃຈປາດຖະໜາອັນຊົ່ວ, ດື່ມເຫລົ້າເມົາສຸລາ, ລ້ຽງກັນຢ່າງເຖິງໃຈ,
ຮ່ວມກັນກິນເຫລົ້າເກີນສ່ວນ, ແລະຂາບໄຫວ້ພຣະທຽມຊຶ່ງຜິດທຳ. 4ໃນເລື່ອງນີ້ເຂົາກໍປະຫລາດ
ໃຈທີ່ພວກທ່ານບໍ່ຍອມແລ່ນໄປເຂົ້າສ່ວນກັບເຂົາ ໃນການຊົ່ວຮ້າຍອັນເຫລືອລົ້ນເໝືອນຢ່າງເຂົາ
ແລະເຂົາກໍກ່າວຄຳນິນທາໃສ່ພວກທ່ານ. 5ຄົນເຫລົ່ານັ້ນຈະຕ້ອງໃຫ້ການແກ່ພຣະອົງ ຜູ້ພ້ອມ
ແລ້ວທີ່ຈະຊົງພິພາກສາທັງຄົນເປັນແລະຄົນຕາຍ. 6ດ້ວຍເຫດນີ້ແຫລະ, ຂ່າວປະເສີດໄດ້ຊົງປະ-
ກາດແກ່ພວກຄົນທີ່ຕາຍໄປແລ້ວເໝືອນກັນ ເພື່ອເຂົາຈະໄດ້ຖືກຊົງພິພາກສາໃນເນື້ອກາຍເໝືອນ
ຢ່າງມະນຸດທົ່ວໆ ໄປແລ້ວຈະໄດ້ມີຊີວິດທາງຈິດວິນຍານຢ່າງດຽວກັບພຣະເຈົ້າ.

7ອາວະສານຂອງສິ່ງທັງປວງໃກ້ຈະມາເຖິງແລ້ວ ເຫດສັນນັ້ນທ່ານທັງຫລາຍຈົ່ງມີສະຕິອັນດີ
ແລະຄອຍລະວັງຕົວສຳລັບການອ້ອນວອນ. 8ທີ່ສຳຄັນກວ່າສິ່ງອື່ນໆທັງໝົດກໍຄືຈົ່ງຮັກເຊິ່ງກັນ
ແລະກັນດ້ວຍເຕັມໃຈ ເພາະຄວາມຮັກປົກບັງຄວາມຜິດບາບໄວ້ຢ່າງຫລວງຫລາຍ. 9ທ່ານທັງ-
ຫລາຍຈົ່ງຕ້ອນຮັບເຊິ່ງກັນແລະກັນໂດຍບໍ່ຈົ່ມ. 10ຕາມທີ່ທຸກຄົນໄດ້ຮັບສິ່ງທີ່ຊົງປະທານໃຫ້ແລ້ວ
ກໍໃຫ້ໃຊ້ຂອງປະທານນັ້ນເພື່ອປະໂຫຍດແກ່ກັນແລະກັນ ເໝືອນເປັນຜູ້ຮັບມອບໝາຍຜູ້ດີທີ່ຮັບ
ໃຊ້ພຣະຄຸນນານາປະການຂອງພຣະເຈົ້າ. 11ຖ້າຜູ້ໃດກ່າວ ກໍໃຫ້ເໝືອນຜູ້ກ່າວພຣະທຳຂອງ
ພຣະເຈົ້າ ຖ້າຜູ້ໃດເປັນຜູ້ບໍລິການຮັບໃຊ້ ກໍໃຫ້ບໍລິການຮັບໃຊ້ເໝືອນຜູ້ຮັບກຳລັງທີ່ພຣະເຈົ້າຊົງ
ໂຜດປະທານໃຫ້ ເພື່ອວ່າພຣະເຈົ້າຈະຊົງໄດ້ກຽດໃນການທັງປວງໂດຍທາງພຣະເຢຊູຄຣິດ

ສະຫງ່າລາສີແລະລິດທານຸພາບຊົງມີແກ່ພຣະອົງສືບໆ ໄປເປັນນິດ ອາແມນ.

## ການຍອມທົນທຸກຢ່າງຄຣິສະຕຽນ

12ພວກທີ່ຮັກເອີຍ, ຢ່າປະຫລາດໃຈທີ່ພວກທ່ານໄດ້ຮັບຄວາມທຸກຮ້ອນຢ່າງແສນສາຫັດເປັນ
ການລອງໃຈ ເໝືອນກັບວ່າເປັນເຫດອັນແປກປະຫລາດເກີດຂຶ້ນກັບພວກທ່ານ. 13ແຕ່ທ່ານທັງ-
ຫລາຍຈົ່ງຊົມຊື່ນຍິນດີທີ່ໄດ້ມີສ່ວນຮ່ວມໃນຄວາມທຸກທໍລະມານຂອງ ພຣະຄຣິດ ເພື່ອວ່າ, ເມື່ອ
ສະຫງ່າລາສີຂອງພຣະອົງປາກົດຂຶ້ນ ພວກທ່ານກໍຈະໄດ້ຊົມຊື່ນຍິນດີຢ່າງຫລວງຫລາຍເໝືອນ
ກັນ. 14ຖ້າທ່ານທັງຫລາຍຖືກໝິ່ນປະໝາດເພາະພຣະນາມຂອງ ພຣະຄຣິດ ພວກທ່ານກໍເປັນ
ສຸກ ເພາະວ່າພຣະວິນຍານຜູ້ຊົງສະຫງ່າລາສີ ຄືພຣະວິນຍານຂອງ ພຣະເຈົ້າ ຊົງສະຖິດຢູ່ກັບ
ພວກທ່ານ. 15ແຕ່ວ່າຢ່າໃຫ້ຜູ້ໃດໃນພວກທ່ານໄດ້ຮັບຄວາມທຸກເພາະເປັນຜູ້ຂ້າຄົນ, ເປັນຂະ-
ໂມຍ, ເປັນຜູ້ທຳຮ້າຍ, ຫລືເປັນຜູ້ທຽວຫຍຸ້ງກ່ຽວກັບກິດທຸລະຂອງຄົນອື່ນ. 16ແຕ່ຖ້າຜູ້ໃດໄດ້ຮັບ
ທຸກເພາະມີຊື່ວ່າເປັນ ຄຣິສະຕຽນ ກໍຢ່າໃຫ້ຜູ້ນັ້ນມີຄວາມລະອາຍ ແຕ່ໃຫ້ຖວາຍພຣະກຽດແດ່
ພຣະເຈົ້າ ເພາະຊື່ນັ້ນ. 17ດ້ວຍວ່າເຖິງເວລາແລ້ວທີ່ການຊົງພິພາກສາຈະຕ້ອງເລີ້ມຕົ້ນທີ່ຄົວເຮືອນ
ຂອງ ພຣະເຈົ້າ ແລະຖ້າການພິພາກສານັ້ນເລີ້ມຕົ້ນທີ່ພວກເຮົາກ່ອນປາຍທາງຂອງຄົນເຫລົ່ານັ້ນ
ທີ່ບໍ່ເຊື່ອຟັງຂ່າວປະເສີດເລື່ອງ ພຣະເຈົ້າ ຈະເປັນຢ່າງໃດ. 18ຖ້າຄົນຊອບທຳຈະລອດພົ້ນໄດ້ດ້ວຍ
ຍາກ ຄົນປະໝາດ ພຣະເຈົ້າ ແລະຄົນຜິດບາບຈະໄປຢູ່ໃສ. 19ເຫດສັນນັ້ນໃຫ້ຄົນທັງຫລາຍທີ່ທົນ
ທຸກທໍລະມານຕາມນ້ຳພຣະໄທຂອງ ພຣະເຈົ້າ ຈົ່ງຝາກຈິດວິນຍານຂອງຕົນໄວ້ກັບພຣະອົງດ້ວຍ
ການປະຕິບັດອັນດີ ຄືໃຫ້ຝາກໄວ້ກັບພຣະອົງຜູ້ຊົງສ້າງຜູ້ທ່ຽງທຳ.

# ບົດທີ 5

## ຈົ່ງລ້ຽງຝູງແກະຂອງພຣະເຈົ້າ

1ເຫດສັນນັ້ນຂ້າພະເຈົ້າໃນຖານະທີ່ເປັນເຖົ້າແກ່ຜູ້ໜຶ່ງ, ເປັນພະຍານເຖິງຄວາມທຸກທໍລະມານ
ຂອງ ພຣະຄຣິດ, ແລະມີສ່ວນທີ່ຈະຮັບສະຫງ່າລາສີຊຶ່ງຈະປະກົດມາພາຍຫລັງ ຈຶ່ງເຕືອນສະຕິ
ບັນດາເຖົ້າແກ່ໃນຖ້າມກາງທ່ານທັງຫລາຍ. 2ຈົ່ງລ້ຽງຝູງແກະຂອງ ພຣະເຈົ້າ ທີ່ຝາກໄວ້ກັບພວກ
ທ່ານ ຈົ່ງດູແລເຂົາບໍ່ແມ່ນດ້ວຍໃຈຂົມຂື່ນ ແຕ່ດ້ວຍເຕັມໃຈຕາມນ້ຳພຣະໄທຂອງ ພຣະເຈົ້າ ບໍ່
ແມ່ນດ້ວຍເຫັນແກ່ຊັບສິ່ງຂອງທີ່ໄດ້ມາໃນທາງທຸຈະລິດ ແຕ່ດ້ວຍໃຈເຫລື້ອມໃສ. 3ບໍ່ແມ່ນ
ເໝືອນເປັນເຈົ້ານາຍເໝືອນພວກທີ່ຊົງຝາກໄວ້ກັບພວກທ່ານ ແຕ່ໃຫ້ເປັນແບບຢ່າງແກ່ຝູງແກະ
ນັ້ນ. 4ແລະເມື່ອພຣະຜູ້ລ້ຽງຜູ້ຍິ່ງໃຫຍ່ຈະສະເດັດມາປະກົດ ທ່ານທັງຫລາຍຈະໄດ້ຮັບສະຫງ່າ
ລາສີເປັນພວງມາໄລທີ່ບໍ່ຮູ້ຫ່ຽວແຫ້ງໄປ.

5ເໝືອນດັ່ງນັ້ນແຫລະ, ພວກທ່ານຜູ້ມີອາຍຸອ່ອນກວ່າ ຈົ່ງນ້ອມຟັງພວກເຖົ້າແກ່ ພວກທ່ານ
ທຸກຄົນຈົ່ງເອົາຄວາມຖ່ອມໃຈເປັນເຄື່ອງຄາດແອວໄວ້[ກ] ໃນການປະຕິບັດເຊິ່ງກັນແລະກັນ
ດ້ວຍວ່າ, “ພຣະເຈົ້າ ຊົງຕໍ່ສູ້ຄົນທີ່ຈອງຫອງ ແຕ່ຊົງປະທານພຣະຄຸນແກ່ຄົນທີ່ຖ່ອມໃຈລົງ.” 6ເຫດ
ສັນນັ້ນທ່ານທັງຫລາຍຈົ່ງຖ່ອມໃຈລົງໃຕ້ພຣະຫັດອັນຊົງລິດຂອງ ພຣະເຈົ້າ ເພື່ອວ່າພຣະອົງຈະ

[ກ]ພາສາເດີມໝາຍເຖິງຜ້າອ້ຽມທີ່ຄົນໃຊ້ເຄີຍໃຊ້ໃນເວລາປະຕິບັດນາຍຂອງຕົນ.

ຊົງຍົກພວກທ່ານຂຶ້ນເມື່ອເຖິງເວລາອັນຄວນ. [7]ຈົ່ງປະຄວາມກະວົນກະວາຍຂອງພວກທ່ານໄວ້
ກັບພຣະອົງ ເພາະວ່າພຣະອົງຊົງຫ່ວງໃຍພວກທ່ານຢູ່. [8]ທ່ານທັງຫລາຍຈົ່ງຄອຍລະວັງຕົວແລະ
ເຝົ້າຢູ່ ດ້ວຍວ່າສັດຕູຂອງພວກທ່ານຄືມານ ທຽວວົນວຽນໄປມາເໝືອນໂຕສິງທີ່ແຜດສຽງຊອກ
ຫາຄົນທີ່ມັນຈະກັດກິນໄດ້. [9]ຈົ່ງຕໍ່ສູ້ກັບສັດຕູນັ້ນດ້ວຍໃຈໝັ້ນຄົງໃນຄວາມເຊື່ອ ໂດຍຮູ້ແລ້ວວ່າ
ພີ່ນ້ອງຂອງພວກທ່ານທົ່ວໂລກກໍປະສົບກັບຄວາມທຸກລຳບາກຢ່າງດຽວກັນນີ້. [10]ແລະເມື່ອທ່ານ
ທັງຫລາຍໄດ້ທົນທຸກຢູ່ຊົ່ວຂະນະໜຶ່ງແລ້ວ ພຣະເຈົ້າຜູ້ຊົງພຣະຄຸນທັງໝົດ, ຜູ້ໄດ້ຊົງເອີ້ນພວກ
ທ່ານໃຫ້ເຂົ້າໃນສະຫງ່າລາສີອັນຕະຫລອດໄປໃນພຣະຄຣິດ ພຣະອົງເອງຈະຊົງໂຜດແປງໃຈ
ພວກທ່ານໃຫ້ຕັ້ງຂຶ້ນໃໝ່ ແລະຕັ້ງໝັ້ນຄົງຢູ່ໃຫ້ມີກຳລັງຂຶ້ນ ແລະຊົງບັນດານໃຫ້ມີຮາກອັນ
ແໜ້ນໜາ. [11]ລິດທານຸພາບຈົ່ງມີແດ່ພຣະອົງຕະຫລອດໄປເປັນນິດ ອາແມນ.

## ຄຳສະແດງຄວາມຄຳນັບຕອນທ້າຍ

[12]ຂ້າພະເຈົ້າໄດ້ຂຽນຢ່າງຫຍໍ້ໆ ມາຍັງທ່ານທັງຫລາຍ ໂດຍຜ່ານທາງຊີລາວານຊຶ່ງຂ້າພະ-
ເຈົ້າຖືວ່າເປັນພີ່ນ້ອງຜູ້ສັດຊື່ຄົນໜຶ່ງ ເພື່ອເຕືອນສະຕິແລະເປັນພະຍານແກ່ພວກທ່ານ ວ່າພຣະ-
ຄຸນນັ້ນເປັນພຣະຄຸນທີ່ແທ້ຈິງຂອງພຣະເຈົ້າ ຈົ່ງຕັ້ງໝັ້ນຄົງຢູ່ໃນພຣະຄຸນນັ້ນ. [13]ນາງ[ກ] ທີ່ຢູ່
ເມືອງບາບີໂລນ ຊຶ່ງຊົງເລືອກໄວ້ຢ່າງດຽວກັບພວກທ່ານ ແລະມາຣະໂກລູກຂອງເຮົາ ກໍຝາກ
ຄວາມຄິດເຖິງມາເໝືອນກັນ. [14]ຈົ່ງທັກທານກັນດ້ວຍການຈູບອັນສະແດງຄວາມຮັກ. ຂໍສັນຕິສຸກ
ຈົ່ງມີແກ່ທ່ານທັງຫລາຍທີ່ຢູ່ໃນພຣະຄຣິດເທີນ.

* * *

[ກ]ພາສາເດີມມີແຕ່ສັບພະນາມວ່າ “ລາວ” (ເພດຍິງ) ແຕ່ອາດຈະໝາຍເຖິງຄຣິສຕະຈັກຢູ່ກຸງໂຣມ (ເຊີນ
ເບິ່ງ ພນມ 17:5).

# ຈົດໝາຍຂອງ
# ເປໂຕ ສະບັບທີສອງ

## ບົດທີ 1

1ຊີໂມນ ເປໂຕ ຂ້ອຍໃຊ້ແລະອັກຄະສາວົກຂອງ ພຣະເຢຊູຄຣິດ ຮຽນ ທ່ານທັງຫລາຍທີ່ໄດ້ຮັບ
ຄວາມເຊື່ອອັນປະເສີດເທົ່າທຽມກັນກັບເຮົາດ້ວຍຄວາມຊອບທຳແຫ່ງ ພຣະເຈົ້າ ຂອງພວກເຮົາ ຄື
ພຣະເຢຊູຄຣິດ ພຣະຜູ້ໂຜດໃຫ້ພົ້ນຂອງເຮົາທັງຫລາຍ. 2ຂໍໃຫ້ພຣະຄຸນແລະສັນຕິສຸກຈົ່ງເພີ່ມທະ-
ວີຄູນແກ່ທ່ານທັງຫລາຍ ໂດຍການຮູ້ຈັກໃນ ພຣະເຈົ້າ ແລະໃນ ພຣະເຢຊູ ອົງ ພຣະຜູ້ເປັນເຈົ້າ
ຂອງພວກເຮົາ.

### ການຊົງເອີ້ນແລະການຊົງເລືອກທ່ານ

3ດ້ວຍເຫັນແລ້ວວ່າລິດເດດຂອງພຣະອົງໄດ້ຊົງປະທານສິ່ງສາລະພັດແກ່ພວກເຮົາ ທີ່ຈະໄດ້ມີ
ຊີວິດແລະຄວາມເຫລື້ອມໃສໃນ ພຣະເຈົ້າ ໂດຍຮູ້ຈັກພຣະອົງຜູ້ທີ່ຊົງເອີ້ນພວກເຈົ້າດ້ວຍສະຫງ່າ
ລາສີ[ກ] ແລະຄວາມລ້ຳເລີດຂອງພຣະອົງເອງ. 4ດ້ວຍສິ່ງເຫລົ່ານັ້ນ ພຣະອົງໄດ້ຊົງປະທານ
ພຣະສັນຍາປະເສີດອັນໃຫຍ່ຫລວງແກ່ເຮົາທັງຫລາຍ ເພື່ອວ່າດ້ວຍສິ່ງເຫລົ່ານີ້ພວກທ່ານຈຶ່ງຈະ
ໜີພົ້ນໄດ້ຈາກການເສື່ອມໂຊມທີ່ມີຢູ່ໃນໂລກນີ້ເພາະຕັນຫາ ແລະຈະໄດ້ຮັບສ່ວນໃນສະພາບ
ຂອງພຣະອົງ. 5ເພາະເຫດນີ້ແຫລະ, ທ່ານທັງຫລາຍຈົ່ງອົດສາພະຍາຍາມຈົນສຸດກຳລັງ ເພື່ອ
ຈະເອົາຄຸນຄວາມດີເພີ່ມຄວາມເຊື່ອ, ແລະເອົາຄວາມຮູ້ເພີ່ມຄຸນຄວາມດີ. 6ເອົາຄວາມຮູ້ຈັກບັງ-
ຄັບຕົນເພີ່ມຄວາມຮູ້, ເອົາຄວາມໝັ້ນໃຈເພີ່ມຄວາມບັງຄັບຕົນ, ເອົາຄວາມເຫລື້ອມໃສໃນ ພຣະ-
ເຈົ້າ ເພີ່ມຄວາມໝັ້ນໃຈ. 7ເອົາຄວາມຮັກພີ່ນ້ອງເພີ່ມຄວາມເຫລື້ອມໃສໃນ ພຣະເຈົ້າ, ແລະເອົາ
ຄວາມຮັກຄົນທົ່ວໄປເພີ່ມຄວາມຮັກພີ່ນ້ອງ. 8ດ້ວຍວ່າຖ້າສິ່ງເຫລົ່ານີ້ມີຢູ່ໃນພວກທ່ານຢ່າງບໍລິບູນ
ແລ້ວ ກໍຈະເຮັດໃຫ້ພວກທ່ານເປັນຄົນດຸໝັ່ນ ແລະເກີດຜົນໃນການຮູ້ຈັກ ພຣະເຢຊູຄຣິດ ເຈົ້າຂອງ
ເຮົາທັງຫລາຍ. 9ເພາະວ່າຜູ້ໃດທີ່ຂາດສິ່ງເຫລົ່ານີ້ກໍເປັນຄົນຕາບອດຕາສັ້ນ ແລະລືມໄປວ່າຕົນ
ໄດ້ຮັບການຊຳລະລ້າງຈາກຜິດບາບອັນເກົ່າກ່ອນຂອງຕົນເສຍແລ້ວ. 10ເພາະເຫດນັ້ນພີ່ນ້ອງ
ທັງຫລາຍເອີຍ, ຈົ່ງອົດສາພະຍາຍາມຫລາຍກວ່າເກົ່າ ເຮັດຕົນໃຫ້ເປັນໄປຕາມທີ່ ພຣະເຈົ້າ ຊົງ
ເອີ້ນແລະຊົງເລືອກໄວ້ນັ້ນ ເພາະວ່າຖ້າເຮັດຢ່າງນັ້ນແຫລະ, ພວກທ່ານກໍຈະບໍ່ສະດຸດລົ້ມລົງຈັກ
ເທື່ອ. 11ດ້ວຍທາງນີ້ແຫລະ, ພຣະເຈົ້າ ຈະຊົງປະທານສິດສົມບູນແກ່ທ່ານທັງຫລາຍ ໃຫ້ເຂົ້າໄປ
ໃນລາຊະແຜ່ນດິນອັນຕະຫລອດໄປເປັນນິດຂອງ ພຣະເຢຊູຄຣິດ ເຈົ້າ ພຣະຜູ້ຊົງໂຜດໃຫ້ພົ້ນ
ຂອງພວກເຮົາ.

12ເຫດສັນນັ້ນ ເຖິງແມ່ນວ່າທ່ານທັງຫລາຍຮູ້ຈັກແລະຕັ້ງໝັ້ນຄົງຢູ່ໃນຄວາມຈິງທີ່ມີຢູ່ແລ້ວກໍດີ
ຂ້າພະເຈົ້າກໍພ້ອມຢູ່ສະເໝີທີ່ຈະເຕືອນສະຕິພວກທ່ານໃຫ້ລະນຶກເຖິງສິ່ງເຫລົ່ານີ້. 13ຕາບໃດທີ່

---

[ກ]ຫລືວ່າ “ໃຫ້ເຖິງສະຫງ່າລາສີ.”

ຂ້າພະເຈົ້າຍັງອາໃສຢູ່ໃນຮ່າງກາຍນີ້ ຂ້າພະເຈົ້າເຫັນສົມຄວນທີ່ຈະປຸກເຕືອນພວກທ່ານໃຫ້ລະ-
ນຶກເຖິງຂໍ້ຄວາມເຫລົ່ານີ້. 14ເພາະຂ້າພະເຈົ້າຮູ້ຢູ່ວ່າອີກບໍ່ເຫິງ ຂ້າພະເຈົ້າກໍຈະປະຖິ້ມຮ່າງກາຍນີ້
ເສຍ ເໝືອນດັ່ງທີ່ພຣະເຢຊູຄຣິດເຈົ້າຂອງພວກເຮົາໄດ້ຊົງສະແດງແກ່ຂ້າພະເຈົ້າແລ້ວ. 15ແລະ
ຂ້າພະເຈົ້າຈະພະຍາຍາມຫາທາງໃຫ້ທ່ານທັງຫລາຍລະນຶກເຖິງສິ່ງເຫລົ່ານີ້ໄດ້ທຸກເວລາເມື່ອຂ້າ-
ພະເຈົ້າຈາກໂລກນີ້ໄປແລ້ວ.

## ພະຍານທີ່ຮູ້ເຫັນເດຊານຸພາບຂອງພຣະຄຣິດ

16ເພາະເມື່ອເຮົາໄດ້ປະກາດໃຫ້ທ່ານທັງຫລາຍຊາບເຖິງລິດເດດແລະການສະເດັດມາຂອງ
ພຣະເຢຊູຄຣິດເຈົ້າຂອງພວກເຮົາ ເຮົາບໍ່ໄດ້ກ່າວຕາມນິຍາຍທີ່ເຂົາແຕ່ງຂຶ້ນດ້ວຍຄວາມສະ-
ຫລາດ ແຕ່ເຮົາເປັນພະຍານຜູ້ຮູ້ເຫັນເດຊານຸພາບຂອງພຣະອົງ. 17ເພາະວ່າພຣະອົງໄດ້ຊົງຮັບ
ກຽດແລະສະຫງ່າລາສີຈາກພຣະບິດາ ຄາວເມື່ອພຣະສຸລະສຽງຈາກລັດສະໝີອັນຮຸ່ງເຮືອງຊົງ
ກ່າວແກ່ພຣະອົງວ່າ, "ທ່ານຜູ້ນີ້ແຫລະ, ເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈຫລາຍໃນທ່ານ."
18ຝ່າຍພວກເຮົາກໍໄດ້ຍິນພຣະສຸລະສຽງນີ້ຈາກສະຫວັນ ເມື່ອພວກເຮົາໄດ້ຢູ່ກັບພຣະອົງທີ່ພູອັນ
ສັກສິດນັ້ນ. 19ສັນນັ້ນພວກເຮົາຍຶດຖືຄຳທຳນວາຍຢ່າງແນ່ນອນກວ່າເກົ່າ ຈະເປັນການດີຖ້າ
ທ່ານທັງຫລາຍຈະຖືຕາມຄຳທຳນວາຍນັ້ນ ເພາະຄຳນັ້ນເປັນເໝືອນແສງໂຄມທີ່ສ່ອງສະຫວ່າງ
ໃນບ່ອນມືດຈົນເຖິງວັນຮຸ່ງເຊົ້າແລະດາວເພັກຈະສ່ອງຂຶ້ນໃນໃຈຂອງພວກທ່ານ. 20ກ່ອນອື່ນ
ທ່ານທັງຫລາຍຕ້ອງເຂົ້າໃຈຂໍ້ນີ້ ຄືຜູ້ໜຶ່ງຜູ້ໃດຈະຕີຄວາມໝາຍຂອງຄຳທຳນວາຍໃນພຣະຄຳພີ
ເອົາເອງບໍ່ໄດ້. 21ເພາະວ່າຄຳທຳນວາຍນັ້ນບໍ່ໄດ້ມາຈາກນ້ຳໃຈຂອງມະນຸດຈັກເທື່ອ ແຕ່ມະນຸດ
ໄດ້ກ່າວຄຳທີ່ມາຈາກພຣະເຈົ້າ ຕາມທີ່ພຣະວິນຍານບໍລິສຸດຊົງດົນໃຈ.

# ບົດທີ 2

## ຜູ້ປະກາດພຣະທຳແລະຄູສອນປອມ

*(ຢູດາ 4-13)*

1ແຕ່ວ່າໄດ້ມີຜູ້ປະກາດພຣະທຳປອມເກີດຂຶ້ນໃນຖ້າມກາງພົນລະເມືອງນັ້ນ ເໝືອນກັບຈະມີຜູ້
ສອນປອມເກີດຂຶ້ນໃນຖ້າມກາງພວກທ່ານ ເຂົາຈະນຳເອົາລັດທິອັນໃຫ້ເຖິງຄວາມຈິບຫາຍລອບ
ເຂົ້າມາສັ່ງສອນ ຈົນເຖິງກັບປະຕິເສດອົງພຣະຜູ້ເປັນເຈົ້າຜູ້ຊົງໄຖ່ເຂົາໄວ້ ຊຶ່ງຈະນຳຄວາມ
ຈິບຫາຍມາເຖິງຕົວເຂົາໂດຍໄວ. 2ຈະມີຫລາຍຄົນຕິດຕາມການຊົ່ວອັນຕ່ຳຊ້າຂອງເຂົາ ແລະ
ເພາະເນື່ອງຈາກຄົນເຫລົ່ານັ້ນເປັນເຫດທາງຂອງຄວາມຈິງຈະຖືກປະໝາດ. 3ແລະດ້ວຍໃຈໂລບ
ເຂົາຈະໄດ້ກຳໄລຈາກພວກທ່ານດ້ວຍກ່າວຄຳຕົວະ ການລົງໂທດຄົນເຫລົ່ານັ້ນທີ່ໄດ້ຖືກພິພາກ-
ສາດົນນານມາແລ້ວກໍບໍ່ເສີຍຊ້າຢູ່ ຄວາມຈິບຫາຍທີ່ຈະເກີດກັບເຂົານັ້ນກໍບໍ່ໄດ້ລືມເຂົາ.
4ເພາະວ່າພຣະເຈົ້າບໍ່ໄດ້ຊົງຍົກເວັ້ນຝູງເທວະດາທີ່ໄດ້ເຮັດບາບນັ້ນ ແຕ່ໄດ້ຊົງຊຸກເຂົາລົງໄປ
ສູ່ພື້ນທໍລະນີ[ກ] ຂັງເຂົາໄວ້ໃນຂຸມມືດ ຄຸມໄວ້ຈົນກວ່າວັນພິພາກສາ. 5ພຣະເຈົ້າບໍ່ໄດ້ຊົງຍົກເວັ້ນ
ມະນຸດສະໂລກຄາວບູຮານ ແຕ່ໄດ້ຮັກສາໂນອາຜູ້ປະກາດຄວາມຊອບທຳກັບຄົນອື່ນອີກເຈັດຄົນ

---

[ກ]ຕາມນິທານປະເທດກຣີກນັ້ນ ພື້ນທໍລະນີກໍມີບ່ອນລົງໂທດເທວະດາທີ່ກະບົດ.

ເມື່ອຄາວທີ່ພຣະອົງໄດ້ຊົງບັນດານໃຫ້ນໍ້າຖ້ວມໂລກຂອງຄົນບໍ່ນັບຖືພຣະເຈົ້າ. 6ພຣະເຈົ້າໄດ້ຊົງ
ເຜົາເມືອງໂຊດົມ ແລະ ເມືອງໂກໂມຣາ ໃຫ້ກາຍເປັນຂີ້ເຖົ່າ ຊຶ່ງເປັນການລົງໂທດໃຫ້ຈິບຫາຍ
ເພື່ອເປັນຕົວຢ່າງແກ່ຄົນທັງຫລາຍທີ່ບໍ່ນັບຖືພຣະເຈົ້າໃນເວລາຕໍ່ໄປ. 7ແລະໄດ້ຊົງໂຜດເອົາໂລດ
ຜູ້ຊອບທຳນັ້ນໃຫ້ພົ້ນ ຄືຜູ້ມີຄວາມທຸກໃຈຫລາຍຍ້ອນກິລິຍາທີ່ຂາດສິນທຳຂອງຄົນຊົ່ວເຫລົ່ານັ້ນ.
8(ເພາະເມື່ອຄົນຊອບທຳຜູ້ນີ້ຢູ່ໃນໝູ່ຄົນຊົ່ວນັ້ນ ການອະທຳຂອງເຂົາທີ່ທ່ານໄດ້ເຫັນແລະໄດ້ຍິນ
ກໍເຮັດໃຫ້ຈິດໃຈທີ່ຊອບທຳຂອງຕົນເປັນທຸກລຳບາກທຸກໆວັນ.) 9ດັ່ງນັ້ນອົງພຣະຜູ້ເປັນເຈົ້າຊົງ
ຊາບວິທີຈະໂຜດເອົາຄົນທີ່ນັບຖືພຣະເຈົ້າໃຫ້ພົ້ນຈາກການທົດລອງ ແລະຊົງຊາບວິທີຄຸມຮັກສາ
ຄົນອະທຳໄວ້ ເພື່ອລົງໂທດເມື່ອວັນພິພາກສາ. 10ເປັນຕົ້ນຈະຊົງລົງໂທດແກ່ຄົນເຫລົ່ານັ້ນທີ່
ປ່ອຍຕົວໄປຕາມກິເລດຕັນຫາ ແລະໝິ່ນປະໝາດຕໍ່ອຳນາດທັງໝົດ

ຄູສອນປອມເຫລົ່ານີ້ມີໃຈກ້າກັ່ນແລະເຮັດຕາມອຳເພີໃຈ ເຂົາບໍ່ສະທ້ານຕົກໃຈເມື່ອກ່າວປະ-
ນາມຕໍ່ຜູ້ມີຍົດສັກ. 11ເຖິງແມ່ນວ່າພວກເທວະດາທີ່ມີລິດກຳລັງຫລາຍກວ່າ ກໍຍັງບໍ່ນຳຄວາມ
ຟ້ອງມາກ່າວປະນາມຄົນເຫລົ່ານັ້ນຕໍ່ພຣະພັກຂອງອົງພຣະຜູ້ເປັນເຈົ້າ. 12ແຕ່ຄົນເຫລົ່ານັ້ນເປັນ
ເໝືອນສັດເດຍລະສານທີ່ບໍ່ມີຄວາມຄິດ ແລະເກີດມາຕາມທຳມະຊາດເພື່ອຖືກຈັບແລະຖືກຂ້າ
ເຂົາກ່າວປະນາມສິ່ງທີ່ເຂົາບໍ່ເຂົ້າໃຈ ເຂົາຈະຕ້ອງຈິບຫາຍໄປຢ່າງດຽວກັນກັບສັດເຫລົ່ານັ້ນ.
13ເຂົາຈະໄດ້ການອະທຳເປັນລາງວັນແຫ່ງການອະທຳຂອງຕົນ ເຂົາຖືເອົາການຫລິ້ນມ່ວນເຮຮາ
ໃນເວລາກາງເວັນເປັນຂອງສະໜຸກ ເຂົາດ່າງພ້ອຍແລະເປື້ອນເປີ ແລະໃຊ້ການຫລິ້ນເຮຮາ
ຫລອກລວງເມື່ອກຳລັງກິນລ້ຽງຮ່ວມກັບທ່ານທັງຫລາຍ. 14ຕາຂອງເຂົາກໍມັກເບິ່ງແຕ່ຍິງທີ່ລ່ວງ
ປະເວນີ ບໍ່ຢຸດບໍ່ຢັ້ງໃນການເຮັດບາບ ເຂົາກ້ຽວກ່ອມຄົນທີ່ມີໃຈບໍ່ໝັ້ນທ່ຽງ ເຂົາມີໃຈເກັ່ງໃນການ
ໂລບ ເປັນຄົນທີ່ຖືກຊົງປ້ອຍດ່າແລ້ວ. 15ເຂົາໄດ້ປະຖິ້ມທາງຊື່ຈິ່ງຫລົງທາງໄປ ເຂົາຕິດຕາມ
ທາງຂອງບາລາອາມລູກເບໂອ ຜູ້ຊຶ່ງຊອບລາງວັນທີ່ມາຈາກການອະທຳ. 16ແຕ່ບາລາອາມ
ນັ້ນໄດ້ຖືກຕິເພາະການລະເມີດຂອງຕົນ ລໍຕົວປາກບໍ່ເປັນກໍຍັງໄດ້ປາກພາສາມະນຸດ ແລະໄດ້
ຫ້າມຄວາມບ້າຂອງບາລາອາມຜູ້ທຳນວາຍນັ້ນໃຫ້ເຊົາ.

17ຄົນເຫລົ່ານີ້ເປັນບໍ່ທີ່ຂາດນໍ້າ ເປັນໝອກທີ່ຖືກພະຍຸພັດໄປ ພຣະອົງຊົງຈັດຊຸມແຫ່ງຄວາມ
ມືດອັດເລິກລັບໄວ້ສຳລັບຄົນເຫລົ່ານັ້ນ. 18ເພາະວ່າເຂົາມັກກ່າວຄຳອວດອ້າງອັນເປົ່າໆ ແລະໃຊ້
ຄວາມປາດຖະໜາຊົ່ວທາງກາຍ ຫລອກລວງຄົນທັງຫລາຍທີ່ກຳລັງໜີພົ້ນຈາກຜູ້ທີ່ດຳເນີນຊີວິດ
ໃນການຫລົງຜິດ. 19ເຂົາສັນຍາວ່າຈະໃຫ້ຄົນເຫລົ່ານັ້ນມີອິດສະຫລະພາບ ແຕ່ຝ່າຍເຂົາເອງກໍ
ຍັງເປັນຂ້ອຍຂ້າຂອງຂອງຄວາມເຊື່ອມໂຊມ ເພາະວ່າມະນຸດຖືກພ່າຍແພ້ແກ່ສິ່ງໃດແລ້ວ ເຂົາກໍ
ເປັນຂ້ອຍຂ້າຂອງສິ່ງນັ້ນ. 20ເພາະວ່າຖ້າຫລັງຈາກທີ່ເຂົາພົ້ນແລ້ວຈາກກິເລດຕັນຫາຂອງໂລກນີ້
ແລ້ວດ້ວຍການທີ່ເຂົາຮູ້ຈັກພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າແລະຜູ້ໂຜດໃຫ້ພົ້ນ ເຂົາກັບພົວ-
ພັນແລະຖືກພ່າຍແພ້ແກ່ການຊົ່ວຮ້າຍນັ້ນອີກ ສະພາບບັ້ນປາຍຂອງເຂົາກໍກັບເປັນຊົ່ວຮ້າຍກວ່າ
ບັ້ນຕົ້ນ. 21ເພາະຖ້າເຂົາບໍ່ໄດ້ຮູ້ຈັກທາງຊອບທຳນັ້ນ ກໍຍັງຈະດີກວ່າທີ່ໄດ້ຮູ້ແລ້ວ ແຕ່ຍັງກັບຫັນ
ຫລັງໃສ່ຂໍ້ບັນຍັດອັນສັກສິດທີ່ຊົງໂຜດມອບໃຫ້ແກ່ເຂົານັ້ນ. 22ຊຶ່ງເກີດແກ່ເຂົານັ້ນກໍເໝືອນດັ່ງສຸ-
ພາສິດອັນຖືກຕ້ອງທີ່ວ່າ, “ໝາໄດ້ຫລົບໄປກິນສິ່ງທີ່ມັນຮາກອອກ” ແລະ “ໝູທີ່ລ້າງແລ້ວກໍກັບ

ລົງໄປນອນລຸຍໃນບວກອີກ."

# ບົດທີ 3

## ຄຳສັນຍາເລື່ອງການສະເດັດມາຂອງອົງພຣະຜູ້ເປັນເຈົ້າ

[1]ພວກທີ່ຮັກເອີຍ, ນີ້ແຫລະ ເປັນຈົດໝາຍສະບັບທີສອງທີ່ຂ້າພະເຈົ້າໄດ້ຂຽນມາເຖິງທ່ານທັງ-
ຫລາຍ ໃນຈົດໝາຍທັງສອງສະບັບນີ້ ຂ້າພະເຈົ້າໄດ້ປຸກເຕືອນຈິດໃຈອັນຊື່ສັດຂອງພວກທ່ານ
ໃຫ້ລະນຶກເຖິງ. [2]ເພື່ອທ່ານທັງຫລາຍຈະໄດ້ຈື່ຈຳຖ້ອຍຄຳທັງຫລາຍທີ່ພວກຜູ້ທຳນວາຍບໍລິສຸດໄດ້
ກ່າວໄວ້ເມື່ອກ່ອນ ແລະຂໍ້ບັນຍັດຂອງອົງພຣະຜູ້ເປັນເຈົ້າຄືພຣະຜູ້ໂຜດໃຫ້ພົ້ນ ໂດຍບັນດາອັກ
ຄະສາວົກຂອງທ່ານທັງຫລາຍ. [3]ກ່ອນອື່ນ, ຈົ່ງຮູ້ຂໍ້ນີ້ ຄືໃນຄາວສຸດທ້າຍຈະມີຄົນເຍາະເຍີ້ຍມາ
ເວົ້າສຽດສີຕາມໃຈປາດຖະໜາຂອງຕົນ. [4]ເຂົາຈະຖາມວ່າ, "ຄຳທີ່ຊົງສັນຍາໄວ້ວ່າພຣະອົງຈະ
ສະເດັດມານັ້ນຢູ່ໃສ ເພາະວ່າຕັ້ງແຕ່ບັນພະບຸລຸດລັບລ່ວງໄປແລ້ວ ສິ່ງທັງປວງກໍເປັນຢູ່ເໝືອນ
ເປັນຢູ່ຕັ້ງແຕ່ເລີ່ມຕົ້ນຊົງສ້າງໂລກ." [5]ເພາະວ່າເຂົາແກ້ງລືມຂໍ້ນີ້ເສຍ ຄືດ້ວຍພຣະທຳຂອງພຣະ-
ເຈົ້າຟ້າສະຫວັນຈຶ່ງໄດ້ມີຢູ່ຕັ້ງແຕ່ບູຮານ ແລະແຜ່ນດິນໂລກຈຶ່ງໄດ້ເກີດຂຶ້ນຈາກນ້ຳແລະດ້ວຍ
ທາງນ້ຳ. [6]ດ້ວຍນ້ຳນັ້ນແຫລະ, ມະນຸດສະໂລກທີ່ມີຢູ່ໃນຂະນະນັ້ນໄດ້ຈິບຫາຍໄປດ້ວຍນ້ຳຖ້ວມ.
[7]ໂດຍພຣະທຳອັນດຽວກັນນັ້ນແຫລະ, ຟ້າແລະດິນທີ່ມີຢູ່ໃນປະຈຸບັນນີ້ ກໍຊົງຮັກສາໄວ້ສຳລັບໃຫ້
ໄຟເຜົາຜານເສຍ ຄືຊົງຮັກສາໄວ້ຈົນກວ່າຈະເຖິງວັນທີ່ບັນດາມະນຸດຊຶ່ງບໍ່ນັບຖືພຣະເຈົ້າ ຈະຖືກ
ຊົງພິພາກສາແລະຈິບຫາຍໄປ

[8]ແຕ່ພວກທີ່ຮັກເອີຍ, ຢ່າລືມຂໍ້ນີ້ວ່າ ຕໍ່ພຣະພັກຂອງອົງພຣະຜູ້ເປັນເຈົ້າວັນດຽວກໍເໝືອນກັບ
ພັນປີ ແລະພັນປີເໝືອນກັບວັນດຽວ. [9]ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສີຍຊ້າໃນເລື່ອງພຣະສັນຍາ
ຂອງພຣະອົງ ເໝືອນດັ່ງບາງຄົນຄິດວ່າຊ້າ ແຕ່ພຣະອົງຊົງອົດກັ້ນພຣະໄທໄວ້ດົນນານເພາະ
ເຫັນແກ່ທ່ານທັງຫລາຍ ພຣະອົງບໍ່ຊົງປະສົງທີ່ຈະໃຫ້ຜູ້ໜຶ່ງຜູ້ໃດຈິບຫາຍເສຍ ແຕ່ຊົງປາດຖະ-
ໜາທີ່ຈະໃຫ້ຄົນທັງປວງມາເຖິງການຖິ້ມໃຈເກົ່າເອົາໃຈໃໝ່. [10]ວັນຂອງອົງພຣະຜູ້ເປັນເຈົ້າຈະ
ມາເຖິງເໝືອນດັ່ງຂະໂມຍມາ ໃນວັນນັ້ນທ້ອງຟ້າຈະລ່ວງເສຍໄປດ້ວຍສຽງດັງກ້ອງສະໜັ່ນ,
ໂລກທາດຈະສະຫລາຍໄປດ້ວຍໄຟ, ແລະແຜ່ນດິນໂລກກັບສາລະພັດທຸກສິ່ງຈະໄໝ້ເສຍໝົດ.
[11]ເມື່ອຮູ້ແລ້ວວ່າສິ່ງທັງປວງຈະສະຫລາຍໄປຢ່າງນີ້ ທ່ານທັງຫລາຍຄວນຈະເປັນຄົນຢ່າງໃດ
ໃນການດຳເນີນຊີວິດອັນບໍລິສຸດແລະການນັບຖືພຣະເຈົ້າ. [12]ຈົ່ງຄອຍຖ້າແລະເຮັ່ງຮີບໃຫ້ວັນ
ຂອງພຣະເຈົ້າມາເຖິງ ຊຶ່ງໃນວັນນັ້ນທ້ອງຟ້າຈະຖືກໄຟເຜົາສະຫລາຍໄປແລະໂລກທາດຈະຖືກ
ໄຟຜານສະຫລາຍໄປ. [13]ແຕ່ວ່າຕາມພຣະສັນຍາຂອງພຣະອົງ ເຮົາທັງຫລາຍຄອຍຖ້າຟ້າອາ-
ກາດໃໝ່ແລະແຜ່ນດິນໂລກໃໝ່ ຊຶ່ງຄວາມຊອບທຳຈະຕັ້ງຢູ່ທີ່ນັ້ນ.

[14]ເຫດສັນນັ້ນພວກທີ່ຮັກເອີຍ, ເມື່ອທ່ານທັງຫລາຍກຳລັງຄອຍຖ້າສິ່ງເຫລົ່ານີ້ຢູ່ຈົ່ງອົດສາພະ-
ຍາຍາມໃຫ້ພຣະອົງຊົງພົບພວກທ່ານຢູ່ໃນຄວາມສະຫງົບ ໂດຍບໍ່ມີຈຸດດ່າງພ້ອຍແລະຂໍ້ຕຳໜິ.
[15]ຈົ່ງຖືວ່າການທີ່ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍຊົງອົດກັ້ນພຣະໄທໄວ້ດົນນານນັ້ນ ກໍ
ເພື່ອໂຜດພວກເຮົາໃຫ້ລອດພົ້ນ ເໝືອນດັ່ງໂປໂລນ້ອງທີ່ຮັກຂອງເຮົາ ໄດ້ຂຽນຈົດໝາຍທັງ-

ຫລາຍ ຕາມສະຕິປັນຍາທີ່ໄດ້ຊົງປະທານແກ່ເພິ່ນນັ້ນ. 16ໃນຈົດໝາຍທຸກສະບັບຂອງເພິ່ນກໍ
ກ່າວເຖິງເຫດການເຫລົ່ານີ້ໄວ້ແລ້ວ ໃນຈົດໝາຍເຫລົ່ານັ້ນມີບາງຂໍ້ທີ່ເຂົ້າໃຈຍາກ ຊຶ່ງຄົນທັງ-
ຫລາຍທີ່ຮູ້ເທົ່າບໍ່ເຖິງການ ແລະທີ່ມີໃຈບໍ່ໝັ້ນຄົງແນ່ນອນ ໄດ້ບິດເບືອນຂໍ້ຄວາມເສຍເໝືອນຢ່າງ
ທີ່ເຂົາໄດ້ບິດເບືອນຂໍ້ອື່ນໆ ໃນພຣະຄຳພີອັນເປັນເຫດໃຫ້ຕົນເອງຈິບຫາຍ. 17ເພາະເຫດນັ້ນ
ພວກທີ່ຮັກເອີຍ, ເມື່ອພວກທ່ານຮູ້ເລື່ອງນີ້ກ່ອນແລ້ວກໍຈົ່ງລະວັງໃຫ້ດີ ເພາະຢ້ານວ່າພວກທ່ານ
ຈະຫລົງໄປເຮັດຜິດ ຕາມການຜິດຂອງຄົນຂາດສິນທຳເຫລົ່ານັ້ນ ແລະທ່ານທັງຫລາຍຈະຕົກ
ເສຍຈາກຄວາມໝັກແໜ້ນໝັ້ນຄົງຂອງຕົນ. 18ແຕ່ຂໍໃຫ້ທ່ານທັງຫລາຍຈະເລີນຂຶ້ນໃນພຣະຄຸນ
ແລະໃນຄວາມຮູ້ ຊຶ່ງມາຈາກພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າ ພຣະຜູ້ໂຜດໃຫ້ພົ້ນຂອງເຮົາ
ທັງຫລາຍ ພຣະກຽດຈົ່ງມີແດ່ພຣະອົງນັ້ນທັງໃນປະຈຸບັນ ແລະຕະຫລອດໄປເປັນນິດ [ອາ
ແມນ].

* * *

# ຈົດໝາຍຂອງ
# ໂຢຮັນ ສະບັບຕົ້ນ

## ບົດທີ 1

### ພຣະທຳອັນຊົງຊີວິດ

1ຊຶ່ງມີຢູ່ແຕ່ປະຖົມມະການ, ຊຶ່ງເຮົາໄດ້ຍິນ, ຊຶ່ງເຮົາໄດ້ເຫັນກັບຕາ, ຊຶ່ງເຮົາໄດ້ພິຈາລະນາ
ເບິ່ງ ແລະມືຂອງເຮົາໄດ້ຈັບຕ້ອງນັ້ນກ່ຽວກັບພຣະທຳອັນຊົງຊີວິດ. 2(ຊີວິດນັ້ນໄດ້ປະກົດມາ
ເຮົາໄດ້ເຫັນແລະເປັນພະຍານ ຈຶ່ງໄດ້ປະກາດຊີວິດອັນຕະຫລອດໄປເປັນນິດນັ້ນແກ່ທ່ານທັງ-
ຫລາຍ ຄືຊີວິດທີ່ດຳລົງຢູ່ກັບພຣະບິດາ ແລະໄດ້ປະກົດແກ່ເຮົາທັງຫລາຍ.) 3ຊຶ່ງເຮົາໄດ້ເຫັນ
ແລະໄດ້ຍິນນັ້ນ ເຮົາກໍໄດ້ປະກາດແກ່ທ່ານທັງຫລາຍເໝືອນກັນ ເພື່ອທ່ານທັງຫລາຍຈະໄດ້ເຂົ້າ
ຮ່ວມສາມັກຄີທຳກັບພວກເຮົາ ພວກເຮົາກໍຮ່ວມສາມັກຄີທຳກັບພຣະບິດາ ແລະກັບພຣະບຸດ
ຂອງພຣະອົງຄືພຣະເຢຊູຄຣິດ. 4ຂໍ້ຄວາມເຫລົ່ານີ້ແຫລະ, ເຮົາຂຽນມາເພື່ອຄວາມຊົມຊື່ນຍິນດີ
ຂອງເຮົາ[ກ] ຈະໄດ້ເຕັມບໍລິບູນ.

### ພຣະເຈົ້າຊົງເປັນຄວາມສະຫວ່າງ

5ນີ້ແຫລະ, ເປັນຂ່າວສານທີ່ເຮົາໄດ້ຍິນຈາກພຣະອົງແລະໄດ້ປະກາດແກ່ທ່ານທັງຫລາຍວ່າ
ພຣະເຈົ້າຊົງເປັນຄວາມສະຫວ່າງ ໃນພຣະອົງບໍ່ມີຄວາມມືດເລີຍ. 6ຖ້າເຮົາຈະວ່າເຮົາຮ່ວມສາ-
ມັກຄີທຳກັບພຣະອົງ ແລະຍັງດຳເນີນຊີວິດຢູ່ໃນຄວາມມືດເຮົາກໍເວົ້າຕົວະແລະບໍ່ປະຕິບັດຕາມ
ຄວາມຈິງ. 7ແຕ່ຖ້າເຮົາທັງຫລາຍດຳເນີນຊີວິດຢູ່ໃນຄວາມສະຫວ່າງ ເໝືອນຢ່າງພຣະອົງຊົງ
ສະຖິດຢູ່ໃນຄວາມສະຫວ່າງ ພວກເຮົາກໍຮ່ວມສາມັກຄີທຳເຊິ່ງກັນແລະກັນ ແລະພຣະໂລຫິດ
ຂອງພຣະເຢຊູຄຣິດພຣະບຸດຂອງພຣະອົງ ກໍຊຳຣະລ້າງພວກເຮົາຈາກຜິດບາບໝົດສິ້ນ. 8ຖ້າ
ເຮົາທັງຫລາຍເວົ້າວ່າພວກເຮົາບໍ່ມີບາບ ພວກເຮົາກໍຫລອກລວງຕົນເອງ ແລະຄວາມຈິງບໍ່ໄດ້ຢູ່
ໃນພວກເຮົາ. 9ຖ້າເຮົາທັງຫລາຍສາລະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງ
ທຳ ຈະຊົງໂຜດຍົກບາບຂອງພວກເຮົາແລະຈະຊົງໂຜດຊຳຣະລ້າງເຮົາທັງຫລາຍຈາກການອະ-
ທຳໝົດສິ້ນ. 10ຖ້າເຮົາທັງຫລາຍເວົ້າວ່າພວກເຮົາບໍ່ໄດ້ເຮັດບາບ ກໍທໍ່ກັບວ່າພວກເຮົາໄດ້ເຮັດໃຫ້
ພຣະອົງເປັນຜູ້ຕົວະ ແລະພຣະທຳຂອງພຣະອົງກໍບໍ່ຢູ່ໃນພວກເຮົາແລ້ວ.

## ບົດທີ 2

### ພຣະເຢຊູຊົງເປັນທະນາຍຄວາມເພື່ອເຮົາ

1ລູກນ້ອຍທັງຫລາຍຂອງເຮົາເອີຍ, ເຮົາຂຽນຂໍ້ຄວາມເຫລົ່ານີ້ມາເຖິງພວກເຈົ້າເພື່ອພວກເຈົ້າ
ຈະບໍ່ໄດ້ເຮັດຜິດ ແຕ່ຖ້າຄົນໃດເຮັດຜິດ ພວກເຮົາກໍມີທະນາຍຄວາມຄືພຣະເຢຊູຄຣິດຜູ້ຊົງທ່ຽງ
ທຳ ທີ່ສະຖິດຢູ່ກັບພຣະບິດາ. 2ແມ່ນດ້ວຍພຣະອົງນີ້ແຫລະ, ທີ່ພຣະເຈົ້າຊົງຍົກຜິດບາບຂອງ

[ກ]ສຳເນົາຕົ້ນສະບັບບາງສະບັບວ່າ "ຂອງເຈົ້າ."

ພວກເຮົາເສຍ ແລະບໍ່ແມ່ນແຕ່ຜິດບາບຂອງພວກເຮົາພວກດຽວ ແຕ່ທັງຜິດບາບຂອງມະນຸດທັງ
ປວງໃນໂລກເໝືອນກັນ.
3ໃນຂໍ້ນີ້ແຫລະ, ເຮົາທັງຫລາຍຄົງສັງເກດໄດ້ວ່າພວກເຮົາຮູ້ຈັກກັບພຣະອົງ ຄືວ່າຖ້າພວກ
ເຮົາຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງ. 4ຄົນໃດທີ່ເວົ້າວ່າ, “ຂ້າພະເຈົ້າຮູ້ຈັກກັບພຣະອົງ”
ແຕ່ບໍ່ຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງ ຜູ້ນັ້ນເປັນຄົນເວົ້າຕົວະ ແລະຄວາມຈິງບໍ່ໄດ້ຢູ່ໃນຄົນ
ນັ້ນແລ້ວ. 5ແຕ່ຜູ້ໃດທີ່ຖືຮັກສາພຣະທຳຂອງພຣະອົງ ຜູ້ນັ້ນແຫລະ, ເປັນຜູ້ຮັກພຣະເຈົ້າຢ່າງຄົບ
ຖ້ວນ ດ້ວຍອາການຢ່າງນີ້ແຫລະ, ເຮົາທັງຫລາຍຈຶ່ງຮູ້ວ່າພວກເຮົາຢູ່ໃນພຣະອົງ. 6ຜູ້ໃດເວົ້າວ່າ
ຕົນຢູ່ໃນພຣະອົງຜູ້ນັ້ນກໍຄວນດຳເນີນຊີວິດຕາມທາງທີ່ພຣະຄຣິດຊົງດຳເນີນນັ້ນເໝືອນກັນ.

## ພຣະບັນຍັດໃໝ່

7ພວກທີ່ຮັກເອີຍ, ເຮົາບໍ່ໄດ້ຂຽນຂໍ້ບັນຍັດໃໝ່ມາເຖິງເຈົ້າທັງຫລາຍ ແຕ່ເປັນຂໍ້ບັນຍັດເກົ່າຊຶ່ງ
ເຈົ້າທັງຫລາຍມີຢູ່ຕັ້ງແຕ່ເດີມແລ້ວ ຂໍ້ບັນຍັດເຫລົ່ານັ້ນ ຄືພຣະທຳທີ່ພວກເຈົ້າໄດ້ຍິນມາແລ້ວ.
8ເຖິງຢ່າງນັ້ນກໍກ່າວໄດ້ວ່າ ເຮົາຂຽນຂໍ້ບັນຍັດໃໝ່ມາເຖິງເຈົ້າທັງຫລາຍ ທີ່ວ່າໃໝ່ທັງຝ່າຍພຣະ-
ອົງແລະຝ່າຍເຈົ້າທັງຫລາຍນັ້ນ ກໍເພາະຄວາມມືດນັ້ນກຳລັງຜ່ານພົ້ນໄປ ແລະຄວາມສະຫວ່າງ
ແທ້ກໍໄດ້ສ່ອງຢູ່ແລ້ວ. 9ຜູ້ໃດທີ່ເວົ້າວ່າຕົນຢູ່ໃນຄວາມສະຫວ່າງ ແຕ່ຍັງກຽດຊັງພີ່ນ້ອງຂອງຕົນ
ຜູ້ນັ້ນກໍຍັງຢູ່ໃນຄວາມມືດຈົນເຖິງດຽວນີ້. 10ຜູ້ທີ່ຮັກພີ່ນ້ອງຂອງຕົນກໍຕັ້ງຢູ່ໃນຄວາມສະຫວ່າງ
ແລະເຫດທີ່ຈະໃຫ້ສະດຸດໃຈກໍບໍ່ມີໃນຄົນນັ້ນ. 11ແຕ່ຜູ້ທີ່ກຽດຊັງພີ່ນ້ອງຂອງຕົນກໍຢູ່ໃນຄວາມມືດ
ແລະທຽວໄປໃນຄວາມມືດ ແລ້ວບໍ່ຮູ້ວ່າຕົນກຳລັງໄປໃສ ເພາະຄວາມມືດໄດ້ເຮັດໃຫ້ຕາຂອງຕົນ
ບອດເສຍແລ້ວ.
12ລູກນ້ອຍທັງຫລາຍເອີຍ, ເຮົາຂຽນຈົດໝາຍເຖິງເຈົ້າທັງຫລາຍ ເພາະວ່າໄດ້ຊົງໃຫ້ອະໄພ
ບາບຂອງພວກເຈົ້າແລ້ວ ເພາະເຫັນແກ່ພຣະນາມຂອງພຣະອົງ. 13ພໍ່ທັງຫລາຍເອີຍ, ເຮົາຂຽນ
ຈົດໝາຍມາເຖິງພວກເຈົ້າ ເພາະພວກເຈົ້າຮູ້ຈັກກັບພຣະອົງ ຜູ້ຊົງດຳລົງຢູ່ຕັ້ງແຕ່ປະຖົມມະການ
ຄົນໜຸ່ມທັງຫລາຍເອີຍ, ເຮົາຂຽນຈົດໝາຍມາເຖິງພວກເຈົ້າ ເພາະພວກເຈົ້າໄດ້ຊະນະມານຮ້າຍ
ນັ້ນແລ້ວ. 14ລູກທັງຫລາຍເອີຍ, ເຮົາຂຽນຈົດໝາຍມາເຖິງພວກເຈົ້າ ເພາະພວກເຈົ້າໄດ້ຮູ້ຈັກກັບ
ພຣະບິດາແລ້ວ ພໍ່ທັງຫລາຍເອີຍ, ເຮົາຂຽນຈົດໝາຍມາເຖິງພວກເຈົ້າ ເພາະພວກເຈົ້າຮູ້ຈັກກັບ
ພຣະອົງຜູ້ຊົງດຳລົງຢູ່ຕັ້ງແຕ່ປະຖົມມະການແລ້ວ ຄົນໜຸ່ມທັງຫລາຍເອີຍ, ເຮົາຂຽນຈົດໝາຍມາ
ເຖິງພວກເຈົ້າ ເພາະພວກເຈົ້າມີກຳລັງແຂງແຮງ ພຣະທຳຂອງພຣະເຈົ້າກໍຕັ້ງຢູ່ໃນພວກເຈົ້າ
ແລະພວກເຈົ້າໄດ້ຊະນະມານຮ້າຍແລ້ວ.
15ຢ່າຮັກໂລກຫລືສິ່ງຂອງທີ່ຢູ່ໃນໂລກ ຖ້າຜູ້ໃດຮັກໂລກ ຄວາມຮັກຕໍ່ພຣະບິດາບໍ່ຢູ່ໃນຜູ້ນັ້ນ.
16ເພາະສາລະພັດທີ່ມີຢູ່ໃນໂລກ ຄືຕັນຫາຂອງເນື້ອກາຍ, ຕັນຫາຂອງຕາ, ແລະຄວາມອວດ
ອ້າງເປົ່າໆ ໃນຊີວິດນີ້ບໍ່ໄດ້ເກີດມາຈາກພຣະບິດາ ແຕ່ເກີດມາຈາກໂລກ. 17ສ່ວນໂລກກັບຕັນ
ຫາຂອງໂລກກຳລັງເສື່ອມສູນໄປ ແຕ່ຜູ້ເຮັດຕາມພຣະໄທຂອງພຣະເຈົ້າຈະຕັ້ງຢູ່ເປັນນິດ.

## ສັດຕູຂອງພຣະຄຣິດ

18ລູກທັງຫລາຍເອີຍ, ບັດນີ້ເປັນເວລາສຸດທ້າຍແລ້ວ ແລະຕາມທີ່ເຈົ້າທັງຫລາຍໄດ້ຍິນໄດ້ຟັງ

ມາແລ້ວວ່າ ຜູ້ຕໍ່ສູ້ພຣະຄຣິດຈະມີມາ ບັດນີ້ຜູ້ຕໍ່ສູ້ພຣະຄຣິດກໍເກີດມີມາຫລາຍແລ້ວ ສັນນັ້ນ
ພວກເຮົາຈຶ່ງຮູ້ວ່າເປັນເວລາສຸດທ້າຍ. 19ເຂົາເຫລົ່ານັ້ນໄດ້ອອກໄປຈາກພວກເຮົາ ແຕ່ເຂົາບໍ່ແມ່ນ
ຝ່າຍພວກເຮົາ ເພາະວ່າຖ້າເຂົາແມ່ນຝ່າຍພວກເຮົາ ເຂົາກໍຈະໄດ້ຕັ້ງຢູ່ກັບພວກເຮົາຕໍ່ໄປ (ແຕ່
ເຂົາໄດ້ອອກໄປແລ້ວ) ເພື່ອປະກົດແຈ້ງວ່າເຂົາເຫລົ່ານັ້ນບໍ່ແມ່ນຝ່າຍພວກເຮົາຈັກຄົນ.

20ແຕ່ຝ່າຍເຈົ້າໄດ້ຮັບການຊົງຫົດສົງຈາກພຣະອົງຜູ້ບໍລິສຸດແລ້ວ ພວກເຈົ້າທຸກຄົນກໍມີຄວາມ
ຮູ້.[ກ] 21ເຮົາໄດ້ຂຽນຈົດໝາຍມາເຖິງເຈົ້າທັງຫລາຍ ບໍ່ແມ່ນເພາະພວກເຈົ້າບໍ່ຮູ້ຄວາມຈິງແຕ່ເພາະ
ເຈົ້າທັງຫລາຍຮູ້ແລ້ວ ແລະເພາະວ່າຄຳຕົວະບໍ່ໄດ້ມາຈາກຄວາມຈິງ. 22ແມ່ນໃຜເປັນຜູ້ເວົ້າຕົວະ
ຄົນບໍ່ແມ່ນຜູ້ນັ້ນທີ່ປະຕິເສດວ່າພຣະເຢຊູບໍ່ແມ່ນພຣະຄຣິດ ຜູ້ທີ່ປະຕິເສດພຣະບິດາກັບພຣະ-
ບຸດ ຜູ້ນັ້ນແຫລະ, ເປັນຜູ້ຕໍ່ສູ້ພຣະຄຣິດ. 23ຜູ້ໃດທີ່ປະຕິເສດພຣະບຸດ ຜູ້ນັ້ນກໍບໍ່ມີພຣະບິດາ
ຜູ້ໃດທີ່ຮັບຮູ້ພຣະບຸດ ຜູ້ນັ້ນກໍມີພຣະບິດາເໝືອນກັນ.

24ຝ່າຍເຈົ້າທັງຫລາຍ, ຈົ່ງໃຫ້ຂໍ້ຄວາມທີ່ພວກເຈົ້າໄດ້ຍິນຕັ້ງແຕ່ຕົ້ນມານັ້ນຕັ້ງຢູ່ກັບພວກເຈົ້າ
ຖ້າຂໍ້ຄວາມທີ່ເຈົ້າທັງຫລາຍໄດ້ຍິນແຕ່ຕົ້ນມານັ້ນຫາກຕັ້ງຢູ່ກັບພວກເຈົ້າ ພວກເຈົ້າກໍຕັ້ງໝັ້ນຄົງຢູ່
ໃນພຣະບຸດແລະໃນພຣະບິດາເໝືອນກັນ. 25ນີ້ແຫລະ, ເປັນພຣະສັນຍາທີ່ພຣະອົງໄດ້ຊົງສັນ-
ຍາໄວ້ແກ່ເຮົາທັງຫລາຍຄືຊີວິດອັນຕະຫລອດໄປເປັນນິດ. 26ຂໍ້ຄວາມເຫລົ່ານີ້ເຮົາໄດ້ຂຽນມາເຖິງ
ເຈົ້າທັງຫລາຍ ກ່ຽວເຖິງເລື່ອງຄົນເຫລົ່ານັ້ນທີ່ຢາກໃຫ້ພວກເຈົ້າຫລົງໄປ.

27ແຕ່ຝ່າຍເຈົ້າທັງຫລາຍ, ການຊົງຫົດສົງທີ່ພວກເຈົ້າໄດ້ຮັບຈາກພຣະອົງນັ້ນ ກໍຍັງຕັ້ງຢູ່ກັບ
ພວກເຈົ້າ ແລະພວກເຈົ້າບໍ່ຕ້ອງການໃຫ້ຜູ້ໃດອີກສອນ ເພາະການຊົງຫົດສົງຂອງພຣະອົງກຳລັງ
ສັ່ງສອນພວກເຈົ້າເຖິງທຸກສິ່ງ ແລະເປັນຄວາມຈິງ ບໍ່ແມ່ນຄວາມຕົວະ ການຊົງຫົດສົງໄດ້ສອນ
ເຈົ້າທັງຫລາຍຢ່າງໃດ ພວກເຈົ້າຈົ່ງຕັ້ງໝັ້ນຄົງຢູ່ໃນພຣະອົງຢ່າງນັ້ນ.

28ແລະບັດນີ້ ລູກນ້ອຍທັງຫລາຍເອີຍ, ຈົ່ງຕັ້ງໝັ້ນຄົງຢູ່ໃນພຣະອົງ ເພື່ອວ່າ, ເມື່ອພຣະອົງ
ຊົງປະກົດ ເຮົາທັງຫລາຍຈະໄດ້ມີໃຈກ້າ ແລະບໍ່ຫລົບໜ້າຈາກພຣະອົງດ້ວຍຄວາມລະອາຍ
ເມື່ອພຣະອົງສະເດັດມາ. 29ຖ້າເຈົ້າຮູ້ວ່າພຣະອົງຊົງທ່ຽງທຳ ພວກເຈົ້າກໍຮູ້ໄດ້ວ່າ[ຂ] ທຸກຄົນທີ່
ປະຕິບັດຕາມຄວາມທ່ຽງທຳນັ້ນກໍບັງເກີດມາຈາກພຣະອົງເໝືອນກັນ.

# ບົດທີ 3

## ບັນດາບຸດຂອງພຣະເຈົ້າ

1ເບິ່ງແມ, ພຣະບິດາຊົງໂຜດປະທານຄວາມຮັກແກ່ເຮົາທັງຫລາຍເປັນຢ່າງໃດທີ່ພຣະເຈົ້າຊົງ
ເອີ້ນພວກເຮົາວ່າບຸດຂອງພຣະອົງ ແລະພວກເຮົາກໍເປັນຢ່າງນັ້ນແລ້ວ ເຫດທີ່ໂລກບໍ່ຮູ້ຈັກເຮົາ
ທັງຫລາຍ ກໍເພາະເຂົາບໍ່ຮູ້ຈັກພຣະອົງນັ້ນແຫລະ. 2ພວກທີ່ຮັກເຮົາເອີຍ, ບັດນີ້ເຮົາເປັນບຸດຂອງ
ພຣະເຈົ້າແລ້ວ ແລະຍັງບໍ່ໄດ້ຊົງສະແດງໃຫ້ຮູ້ຄັກວ່າຕໍ່ໄປພວກເຮົາຈະເປັນຢ່າງໃດ ແຕ່ພວກ
ເຮົາຮູ້ວ່າ ເມື່ອພຣະອົງນັ້ນ[ຂ] ຈະສະເດັດມາປະກົດນັ້ນ[ຂ] ເຮົາທັງຫລາຍຈະເປັນເໝືອນພຣະອົງ
ເພາະວ່າພວກເຮົາຈະເຫັນພຣະອົງຢ່າງທີ່ພຣະອົງຊົງເປັນຢູ່ນັ້ນ. 3ທຸກຄົນທີ່ມີຄວາມຫວັງໃນ

[ກ]ສຳເນົາຕົ້ນສະບັບບາງສະບັບວ່າ “ພວກເຈົ້າກໍຮູ້ທຸກສິ່ງ.” [ຂ]ຫລືວ່າ “ພວກເຈົ້າຈົ່ງຮູ້ວ່າ.”
[ຂ]ຄື ອົງພຣະຄຣິດ. [ຂ]ຫລືວ່າ “ເມື່ອໄດ້ຊົງສະແດງໃຫ້ຮູ້ແລ້ວ.”

ພຣະອົງດັ່ງກ່າວມານີ້ ກໍຊຳຣະລ້າງຕົນໃຫ້ບໍລິສຸດເໝືອນພຣະຄຣິດຊົງບໍລິສຸດ.
4ທຸກຄົນທີ່ເຮັດບາບກໍເຮັດຜິດຕໍ່ພຣະບັນຍັດເໝືອນກັນ ບາບເປັນສິ່ງທີ່ຜິດຕໍ່ພຣະບັນຍັດ.
5ເຈົ້າທັງຫລາຍຮູ້ແລ້ວວ່າພຣະຄຣິດໄດ້ຊົງປະກົດເພື່ອຍົກເອົາຜິດບາບໄປເສຍ ແລະພຣະອົງນັ້ນ
ບໍ່ຊົງມີບາບເລີຍ. 6ຜູ້ໃດຕັ້ງໝັ້ນຢູ່ໃນພຣະອົງ ຜູ້ນັ້ນກໍບໍ່ເຮັດບາບຕາມເຄີຍຜູ້ໃດທີ່ຍັງເຮັດບາບ
ຕາມເຄີຍ ຜູ້ນັ້ນຍັງບໍ່ເຫັນພຣະອົງ ແລະຍັງບໍ່ຮູ້ຈັກພຣະອົງ. 7ລູກນ້ອຍທັງຫລາຍເອີຍ, ຢ່າໃຫ້ຜູ້
ໃດຊັກຈູງພວກເຈົ້າໃຫ້ຫລົງ ຜູ້ທີ່ເຮັດຕາມຄວາມທ່ຽງທຳ ກໍເປັນຜູ້ທ່ຽງທຳ ເໝືອນພຣະຄຣິດຊົງ
ທ່ຽງທຳ. 8ຜູ້ທີ່ເຮັດບາບຕາມເຄີຍກໍມາຈາກມານ ເພາະວ່າມານໄດ້ເຮັດບາບຕັ້ງແຕ່ຕົ້ນເດີມມາ
ພຣະບຸດຂອງພຣະເຈົ້າໄດ້ສະເດັດມາປະກົດກໍເພາະເຫດນີ້ແຫລະ ຄືເພື່ອຊົງທຳລາຍກິດຈະ-
ການຂອງມານເສຍ. 9ຜູ້ໃດທີ່ເກີດຈາກພຣະເຈົ້າ ກໍບໍ່ເຮັດບາບຕາມເຄີຍ ເພາະສະພາບຂອງ
ພຣະອົງຊົງດຳລົງຢູ່ໃນຜູ້ນັ້ນແລະຜູ້ນັ້ນບໍ່ອາດເຮັດບາບຕາມເຄີຍ ເພາະຕົນໄດ້ບັງເກີດມາຈາກ
ພຣະເຈົ້າ. 10ດັ່ງນີ້ແຫລະ, ຈຶ່ງເຫັນໄດ້ວ່າຜູ້ໃດເປັນບຸດຂອງພຣະເຈົ້າ ແລະຜູ້ໃດເປັນລູກຂອງ
ມານ ຄືວ່າຜູ້ໃດທີ່ບໍ່ໄດ້ເຮັດຕາມຄວາມທ່ຽງທຳຫລືບໍ່ຮັກພີ່ນ້ອງຂອງຕົນຜູ້ນັ້ນກໍບໍ່ໄດ້ມາຈາກ
ພຣະເຈົ້າ.

## ຈົ່ງຮັກກັນແລະກັນ

11ດ້ວຍວ່ານີ້ແຫລະ, ເປັນຂໍ້ຄວາມທີ່ເຈົ້າໄດ້ຍິນໄດ້ຟັງຕັ້ງແຕ່ເດີມແລ້ວຄືໃຫ້ພວກເຮົາຮັກຊຶ່ງ
ກັນແລະກັນ. 12ຢ່າໄດ້ເປັນເໝືອນກາອິນຜູ້ມາຈາກມານແລະໄດ້ຂ້ານ້ອງຂອງຕົນເສຍ ດ້ວຍ
ເຫດໃດລາວຈຶ່ງຂ້ານ້ອງ ກໍເພາະການເຮັດຂອງຕົນຊົ່ວ ແລະການເຮັດຂອງນ້ອງນັ້ນຊອບທຳ.
13ພີ່ນ້ອງທັງຫລາຍເອີຍ, ຖ້າໂລກນີ້ກຽດຊັງພວກເຈົ້າຢ່າປະຫລາດໃຈ. 14ຝ່າຍເຮົາທັງຫລາຍ
ຮູ້ແລ້ວວ່າ ພວກເຮົາໄດ້ຍ້າຍອອກຈາກຄວາມຕາຍເຂົ້າສູ່ຊີວິດແລ້ວກໍເພາະພວກເຮົາຮັກພີ່ນ້ອງ
ຜູ້ໃດທີ່ບໍ່ຮັກ ຜູ້ນັ້ນກໍຍັງຢູ່ໃນຄວາມຕາຍ. 15ຜູ້ໃດທີ່ກຽດຊັງພີ່ນ້ອງຂອງຕົນກໍເປັນຜູ້ຂ້າຄົນ ແລະ
ເຈົ້າທັງຫລາຍຮູ້ແລ້ວວ່າ ຜູ້ຂ້າຄົນບໍ່ມີຊີວິດອັນຕະຫລອດໄປເປັນນິດຕັ້ງຢູ່ໃນຕົນຈັກຄົນ. 16ດັ່ງນີ້
ແຫລະ, ເຮົາທັງຫລາຍຈຶ່ງຮູ້ຈັກຄວາມຮັກ ໂດຍທີ່ພຣະຄຣິດໄດ້ຊົງຍອມສະຫລະພຣະຊົນຂອງ
ພຣະອົງເພື່ອເຮົາທັງຫລາຍ ຝ່າຍພວກເຮົາຄວນຈະສະຫລະຊີວິດຂອງພວກເຮົາເພື່ອພີ່ນ້ອງ
ເໝືອນກັນ. 17ແຕ່ຖ້າຜູ້ໃດມີຊັບສົມບັດໃນໂລກນີ້ແລະເຫັນພີ່ນ້ອງຂອງຕົນຂັດສົນ ແລ້ວຍັງບໍ່
ຍອມມີໃຈເມດຕາຊ່ອຍເຫລືອຜູ້ນັ້ນ ຄວາມຮັກຕໍ່ພຣະເຈົ້າຈະດຳລົງຢູ່ໃນຕົນໄດ້ຢ່າງໃດ.
18ລູກນ້ອຍທັງຫລາຍ, ຢ່າໃຫ້ເຮົາຮັກດ້ວຍຄວາມເວົ້າແລະດ້ວຍປາກເທົ່ານັ້ນ ແຕ່ຈົ່ງສະແດງ
ຄວາມຮັກອັນແທ້ຈິງດ້ວຍການກະທຳ.

## ຄວາມແນ່ໃຈໃນພຣະເຈົ້າ

19ດ້ວຍເຫດນີ້ແຫລະ, ເຮົາທັງຫລາຍກໍຮູ້ແລ້ວວ່າພວກເຮົາຢູ່ຝ່າຍຄວາມຈິງພວກເຮົາຈຶ່ງມີ
ຄວາມແນ່ໃຈຕໍ່ພຣະພັກພຣະອົງ. 20ເພາະວ່າຖ້າໃຈຂອງພວກເຮົາກ່າວໂທດໃສ່ຕົວເຮົາເມື່ອໃດ
ພຣະເຈົ້າຊົງເປັນໃຫຍ່ກວ່າໃຈຂອງພວກເຮົາ ແລະພຣະອົງຊົງຊາບທຸກໆ ສິ່ງ. 21ພວກທີ່ຮັກ
ເອີຍ, ຖ້າໃຈຂອງພວກເຮົາບໍ່ກ່າວໂທດໃສ່ຕົວເຮົາ ເຮົາກໍມີຄວາມແນ່ໃຈຕໍ່ພຣະພັກພຣະເຈົ້າ.
22ແລະພວກເຮົາຂໍສິ່ງໃດ ເຮົາກໍໄດ້ສິ່ງນັ້ນຈາກພຣະອົງ ເພາະວ່າພວກເຮົາຖືຮັກສາຂໍ້ບັນຍັດ

ຂອງພຣະອົງ ແລະປະຕິບັດຕາມຊອບພຣະໄທພຣະອົງ. 23ນີ້ແຫລະ, ເປັນຂໍ້ບັນຍັດຂອງ ພຣະ-
ເຈົ້າ ຄືວ່າ ໃຫ້ເຮົາທັງຫລາຍວາງໃຈເຊື່ອໃນພຣະນາມຂອງ ພຣະເຢຊູຄຣິດ ພຣະບຸດ ຂອງພຣະ-
ອົງ ແລະໃຫ້ພວກເຮົາຮັກຊຶ່ງກັນແລະກັນ ຕາມທີ່ ພຣະຄຣິດ ໄດ້ຊົງບັນຍັດໄວ້ແກ່ພວກເຮົາ. 24ຜູ້
ໃດທີ່ຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງ ກໍຕັ້ງຢູ່ໃນພຣະອົງ ແລະພຣະອົງຊົງສະຖິດຢູ່ໃນຜູ້
ນັ້ນ ດ້ວຍເຫດນີ້ແຫລະ, ເຮົາທັງຫລາຍຈຶ່ງຮູ້ວ່າພຣະອົງຊົງສະຖິດຢູ່ໃນພວກເຮົາ ຄືດ້ວຍ ພຣະ-
ວິນຍານ ທີ່ພຣະອົງຊົງ ໂຜດປະທານ ແກ່ພວກເຮົາແລ້ວ.

# ບົດທີ 4

## ພຣະວິນຍານຂອງພຣະເຈົ້າແລະວິນຍານຂອງຜູ້ຕໍ່ສູ້ພຣະຄຣິດ

1ພວກທີ່ຮັກເອີຍ, ຢ່າເຊື່ອວິນຍານທຸກໆ ດວງ ແຕ່ຈົ່ງພິສູດວິນຍານທັງຫລາຍນັ້ນວ່າມາຈາກ
ພຣະເຈົ້າ ຫລືບໍ່ ເພາະວ່າມີຜູ້ທຳນວາຍປອມຫລາຍຄົນໄດ້ອອກໄປໃນໂລກ. 2ດ້ວຍຂໍ້ນີ້ແຫລະ,
ເຈົ້າທັງຫລາຍກໍຈະຮູ້ຈັກ ພຣະວິນຍານ ຂອງ ພຣະເຈົ້າ ຄືວິນຍານທັງປວງທີ່ຍອມຮັບຮູ້ວ່າ ພຣະ-
ເຢຊູຄຣິດ ໄດ້ສະເດັດລົງມາຮັບຊາດ ເປັນມະນຸດ ວິນຍານນັ້ນກໍມາຈາກ ພຣະເຈົ້າ. 3ແລະວິນ
ຍານທັງປວງທີ່ບໍ່ຍອມຮັບຮູ້ ພຣະເຢຊູ ວິນຍານນັ້ນກໍບໍ່ໄດ້ມາຈາກ ພຣະເຈົ້າ ວິນຍານນັ້ນ
ແຫລະ, ເປັນວິນຍານຂອງຜູ້ຕໍ່ສູ້ ພຣະຄຣິດ ຊຶ່ງເຈົ້າໄດ້ຍິນວ່າຈະມາ ແລະບັດນີ້ກໍຢູ່ໃນໂລກ
ແລ້ວ.

4ລູກນ້ອຍທັງຫລາຍ ເອີຍ, ສ່ວນ ເຈົ້າທັງຫລາຍກໍ ເປັນຝ່າຍ ພຣະເຈົ້າ ແລະໄດ້ຊະນະ ເຂົາ
ເຫລົ່ານັ້ນ ແລ້ວ ເພາະວ່າພຣະອົງຜູ້ຊົງສະຖິດຢູ່ໃນພວກ ເຈົ້າ ຊົງ ເປັນ ໃຫຍ່ກວ່າຜູ້ນັ້ນທີ່ຢູ່ໃນ
ໂລກ. 5ສ່ວນເຂົາເຫລົ່ານັ້ນກໍເປັນຝ່າຍໂລກ ເຫດສັນນັ້ນເຂົາຈຶ່ງເວົ້າຕາມໂລກ ແລະໂລກກໍເຊື່ອ
ຟັງເຂົາ. 6ສ່ວນເຮົາທັງຫລາຍເປັນຝ່າຍ ພຣະເຈົ້າ ຜູ້ທີ່ຮູ້ຈັກ ພຣະເຈົ້າ ກໍເຊື່ອຟັງພວກເຮົາ ຜູ້ທີ່ບໍ່ຢູ່
ຝ່າຍ ພຣະເຈົ້າ ກໍບໍ່ເຊື່ອຟັງພວກເຮົາ ດັ່ງນີ້ແຫລະ, ເຮົາທັງຫລາຍຈຶ່ງຮູ້ວິນຍານຂອງຄວາມຈິງ
ແລະວິນຍານຂອງຄວາມຜິດ.

## ພຣະເຈົ້າຊົງເປັນຄວາມຮັກ

7ພວກທີ່ຮັກ ເອີຍ, ຈົ່ງ ໃຫ້ ເຮົາທັງຫລາຍຮັກ ເຊິ່ງກັນ ແລະກັນ ເພາະວ່າຄວາມຮັກມາຈາກ
ພຣະເຈົ້າ ທຸກຄົນທີ່ຮັກກໍບັງເກີດມາຈາກ ພຣະເຈົ້າ ແລະຮູ້ຈັກ ພຣະເຈົ້າ. 8ຜູ້ທີ່ບໍ່ຮັກກໍບໍ່ຮູ້ຈັກ
ພຣະເຈົ້າ ເພາະວ່າ ພຣະເຈົ້າ ຊົງ ເປັນຄວາມຮັກ. 9ດ້ວຍຂໍ້ນີ້ແຫລະ, ຄວາມຮັກຂອງ ພຣະເຈົ້າ
ສຳລັບ ເຮົາທັງຫລາຍ ໄດ້ປະກົດ ແຈ້ງ ຄື ພຣະເຈົ້າ ໄດ້ຊົງ ໃຊ້ ພຣະບຸດ ອົງດຽວຂອງພຣະອົງ ເຂົ້າ
ມາໃນ ໂລກ ເພື່ອເຮົາທັງຫລາຍຈະ ໄດ້ມີຊີວິດດ້ວຍ ພຣະບຸດ ນັ້ນ. 10ຄວາມຮັກທີ່ເຮົາກ່າວເຖິງນີ້
ແຫລະ, ບໍ່ແມ່ນພວກເຮົາທັງຫລາຍໄດ້ຮັກ ພຣະເຈົ້າ ແຕ່ ພຣະເຈົ້າ ໄດ້ຊົງຮັກໃຫ້ພວກເຮົາ ແລະ
ຊົງໃຊ້ ພຣະບຸດ ຂອງພຣະອົງມາ ເພື່ອເປັນທາງຊົງຍົກຜິດບາບຂອງພວກເຮົາ.

11ພວກທີ່ຮັກເອີຍ, ຖ້າ ພຣະເຈົ້າ ໄດ້ຊົງຮັກເຮົາທັງຫລາຍຢ່າງນັ້ນ ພວກເຮົາຄວນຈະຮັກຊຶ່ງ
ກັນແລະກັນ. 12ຝ່າຍ ພຣະເຈົ້າ ບໍ່ມີໃຜໄດ້ ເຫັນ ຈັກເທື່ອ ຖ້າພວກເຮົາທັງຫລາຍຮັກຊຶ່ງກັນແລະ
ກັນ ພຣະເຈົ້າ ກໍຊົງສະຖິດຢູ່ໃນ ເຮົາທັງຫລາຍ ແລະຄວາມຮັກຂອງພຣະອົງກໍສົມບູນໃນພວກ

ເຮົາ. [13]ດັ່ງນີ້ແຫລະ, ເຮົາທັງຫລາຍຈຶ່ງຮູ້ວ່າພວກເຮົາຢູ່ໃນພຣະອົງ ແລະພຣະອົງຊົງສະຖິດຢູ່
ໃນ ພວກ ເຮົາ ເພາະ ພຣະອົງ ໄດ້ ຊົງ ໂຜດ ປະທານ ພຣະວິນຍານ ຂອງ ພຣະອົງ ແກ່ ພວກ ເຮົາ.
[14]ຝ່າຍເຮົາທັງຫລາຍໄດ້ເຫັນແລະເປັນພະຍານວ່າ ພຣະບິດາໄດ້ຊົງໃຊ້ພຣະບຸດມາເປັນຜູ້ໂຜດ
ມະນຸດສະໂລກໃຫ້ລອດພົ້ນ.

[15]ຜູ້ໃດທີ່ຍອມຮັບວ່າ ພຣະເຢຊູ ຊົງ ເປັນ ພຣະບຸດ ຂອງ ພຣະເຈົ້າ ພຣະເຈົ້າກໍຊົງສະຖິດຢູ່ໃນຜູ້
ນັ້ນ ແລະຜູ້ນັ້ນກໍຕັ້ງຢູ່ໃນ ພຣະເຈົ້າ. [16]ຝ່າຍເຮົາທັງຫລາຍໄດ້ຮູ້ຈັກແລະໄດ້ເຊື່ອໃນຄວາມຮັກທີ່
ພຣະເຈົ້າ ໄດ້ຊົງມີຕໍ່ພວກເຮົາ ພຣະເຈົ້າ ຊົງ ເປັນຄວາມຮັກ ຜູ້ໃດທີ່ຕັ້ງຢູ່ໃນຄວາມຮັກກໍຢູ່ໃນ
ພຣະເຈົ້າ ແລະ ພຣະເຈົ້າກໍຊົງສະຖິດຢູ່ໃນຜູ້ນັ້ນ. [17]ໃນຂໍ້ນີ້ແຫລະ, ຄວາມຮັກເປັນທີ່ສຳເລັດໃນ
ເຮົາທັງຫລາຍ ເພື່ອວ່າພວກເຮົາຈະໄດ້ມີຄວາມແນ່ໃຈໃນວັນພິພາກສາເພາະ ພຣະຄຣິດ ຊົງ ເປັນ
ຢ່າງໃດ ເຮົາທັງຫລາຍໃນໂລກນີ້ກໍເປັນຢ່າງນັ້ນ. [18]ໃນຄວາມຮັກນັ້ນບໍ່ມີຄວາມຢ້ານ ແຕ່ຄວາມ
ຮັກທີ່ສຳເລັດນັ້ນກໍຂັບໄລ່ຄວາມຢ້ານອອກເສຍ ເພາະຄວາມຢ້ານກ່ຽວກັບການລົງໂທດ ແລະຜູ້
ທີ່ຢ້ານກໍຍັງບໍ່ສຳເລັດໃນຄວາມຮັກ. [19]ຝ່າຍເຮົາທັງຫລາຍໄດ້ຮັກ[ກ] ເພາະພຣະອົງໄດ້ຊົງຮັກ
ພວກເຮົາກ່ອນ.

[20]ຖ້າຜູ້ໃດເວົ້າວ່າ, "ຂ້າພະເຈົ້າຮັກ ພຣະເຈົ້າ" ແລະຍັງກຽດຊັງພີ່ນ້ອງຂອງຕົນ ຜູ້ນັ້ນກໍເປັນ
ຄົນເວົ້າຕົວະ ເພາະຜູ້ທີ່ບໍ່ຮັກພີ່ນ້ອງຂອງຕົນທີ່ຕາເຫັນແລ້ວ ກໍບໍ່ສາມາດຈະຮັກ ພຣະເຈົ້າທີ່ຕາບໍ່
ເຫັນນັ້ນ. [21]ຂໍ້ບັນຍັດນີ້ເຮົາທັງຫລາຍກໍໄດ້ມາຈາກພຣະອົງ ຄືວ່າໃຫ້ຜູ້ທີ່ຮັກ ພຣະເຈົ້າ ນັ້ນ ຈົ່ງ
ຮັກພີ່ນ້ອງຂອງຕົນເໝືອນກັນ.

# ບົດທີ 5

## ຄວາມເຊື່ອໄຊຊະນະເໜືອໂລກ

[1]ຜູ້ໃດທີ່ເຊື່ອວ່າ ພຣະເຢຊູ ຊົງ ເປັນ ພຣະຄຣິດ ຜູ້ນັ້ນກໍເກີດຈາກ ພຣະເຈົ້າ ທຸກຄົນທີ່ຮັກ ພຣະ-
ເຈົ້າ ຜູ້ຊົງໃຫ້ກຳເນີດ ຜູ້ນັ້ນກໍຮັກລູກຂອງພຣະອົງເໝືອນກັນ. [2]ໂດຍຂໍ້ນີ້ແຫລະ, ເຮົາທັງຫລາຍ
ຈຶ່ງຮູ້ວ່າພວກເຮົາຮັກລູກທັງຫລາຍຂອງ ພຣະເຈົ້າ ຄືເມື່ອພວກເຮົາຮັກ ພຣະເຈົ້າ ແລະຖືຮັກສາ
ບັນດາຂໍ້ບັນຍັດຂອງພຣະອົງ. [3]ເພາະນີ້ແຫລະ, ເປັນຄວາມຮັກຕໍ່ ພຣະເຈົ້າ ຄືໃຫ້ເຮົາທັງຫລາຍ
ຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງ ແລະຂໍ້ບັນຍັດຂອງພຣະອົງນັ້ນກໍບໍ່ຍາກໜັກ. [4]ເພາະທຸກ
ຄົນທີ່ເກີດຈາກ ພຣະເຈົ້າ ກໍມີໄຊຕໍ່ໂລກ ແລະຄວາມເຊື່ອຂອງພວກເຮົານີ້ແຫລະ ເປັນໄຊຊະນະ
ທີ່ຊະນະຕໍ່ໂລກ. [5]ໃຜໜໍທີ່ໄຊຊະນະຕໍ່ໂລກ ຖ້າບໍ່ແມ່ນຜູ້ທີ່ເຊື່ອວ່າ ພຣະເຢຊູ ຊົງ ເປັນ ພຣະບຸດ
ຂອງ ພຣະເຈົ້າ.

## ພະຍານກ່ຽວກັບພຣະບຸດ

[6]ນີ້ແຫລະ, ຄືຜູ້ທີ່ໄດ້ມາໂດຍນ້ຳແລະພຣະໂລຫິດ ຄື ພຣະເຢຊູຄຣິດ ບໍ່ແມ່ນດ້ວຍນ້ຳສິ່ງດຽວ
ແຕ່ດ້ວຍນ້ຳ ແລະພຣະ ໂລຫິດ ແລະ ພຣະວິນຍານ ຊົງ ເປັນພະຍານ ເພາະ ພຣະວິນຍານ ຊົງ ເປັນ-
ຄວາມຈິງ. [7]ມີພະຍານຢູ່ສາມປະການຄື, [8]ພຣະວິນຍານ, ນ້ຳ, ແລະພຣະໂລຫິດ ແລະພະຍານ

---

[ກ]ຫລືວ່າ "ຈົ່ງຮັກ"

ທັງສາມນີ້ສອດຄ້ອງກັນ.
9ຖ້າເຮົາທັງຫລາຍຮັບພະຍານຫລັກຖານຂອງມະນຸດ ພະຍານຫລັກຖານຂອງພຣະເຈົ້າກໍ
ໃຫຍ່ກວ່າ ເພາະວ່ານີ້ແຫລະ, ພະຍານຫລັກຖານຂອງພຣະເຈົ້າ ຄືພຣະອົງໄດ້ຊົງເປັນພະຍານ
ອ້າງເຖິງພຣະບຸດຂອງພຣະອົງ. 10ຜູ້ທີ່ເຊື່ອໃນພຣະບຸດຂອງພຣະເຈົ້າກໍມີພະຍານຢູ່ໃນຕົວເອງ
ຜູ້ທີ່ບໍ່ເຊື່ອພຣະເຈົ້າກໍໄດ້ເຮັດໃຫ້ພຣະອົງເປັນຜູ້ຕົວະ ເພາະຕົນບໍ່ໄດ້ເຊື່ອຄຳພະຍານທີ່ພຣະເຈົ້າ
ໄດ້ຊົງເປັນພະຍານອ້າງເຖິງພຣະບຸດຂອງພຣະອົງ. 11ນີ້ແຫລະ, ເປັນພະຍານຫລັກຖານນັ້ນ ຄື
ວ່າພຣະເຈົ້າໄດ້ຊົງໂຜດປະທານຊີວິດອັນຕະຫລອດໄປເປັນນິດໃຫ້ເຮົາທັງຫລາຍ ແລະຊີວິດນີ້ມີ
ຢູ່ໃນພຣະບຸດຂອງພຣະອົງ. 12ຜູ້ທີ່ມີພຣະບຸດກໍມີຊີວິດ ຜູ້ທີ່ບໍ່ມີພຣະບຸດຂອງພຣະເຈົ້າກໍບໍ່ມີຊີ-
ວິດ.

## ຄວາມຮູ້ເລື່ອງຊີວິດອັນຕະຫລອດໄປເປັນນິດ

13ຂໍ້ຄວາມເຫລົ່ານີ້ ເຮົາຂຽນມາເຖິງເຈົ້າທັງຫລາຍທີ່ເຊື່ອໃນພຣະນາມພຣະບຸດຂອງພຣະ-
ເຈົ້າ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ວ່າພວກເຈົ້າມີຊີວິດອັນຕະຫລອດໄປເປັນນິດ.

14ນີ້ແຫລະ, ເປັນຄວາມແນ່ໃຈທີ່ເຮົາທັງຫລາຍມີຢູ່ຕໍ່ພຣະອົງ ຄືຖ້າພວກເຮົາທູນຂໍສິ່ງໃດທີ່
ເປັນຕາມພຣະໄທຂອງພຣະອົງ ພຣະອົງກໍຊົງໂຜດຟັງພວກເຮົາ. 15ແລະຖ້າເຮົາທັງຫລາຍຮູ້ວ່າ
ພຣະອົງຊົງໂຜດຟັງແລ້ວ ເມື່ອພວກເຮົາທູນຂໍສິ່ງໃດ ພວກເຮົາຈຶ່ງຮູ້ວ່າພວກເຮົາໄດ້ຮັບສິ່ງທີ່
ພວກເຮົາຂໍຈາກພຣະອົງນັ້ນ. 16ຖ້າຜູ້ໃດເຫັນພີ່ນ້ອງຂອງຕົນເຮັດຜິດບາບທີ່ບໍ່ນຳໄປສູ່ຄວາມຕາຍ
ຜູ້ນັ້ນຈົ່ງທູນຂໍແລະພຣະອົງຈະຊົງໂຜດປະທານຊີວິດແກ່ຜູ້ທີ່ໄດ້ເຮັດບາບທີ່ບໍ່ນຳໄປສູ່ຄວາມຕາຍ
ຜິດບາບທີ່ນຳໄປສູ່ຄວາມຕາຍກໍມີຢູ່ ເຮົາບໍ່ໄດ້ເວົ້າວ່າໃຫ້ອ້ອນວອນໃນເລື່ອງຜິດບາບນັ້ນ.
17ການອະທຳທຸກຢ່າງກໍເປັນຜິດບາບ ແຕ່ການບາບທີ່ບໍ່ນຳໄປສູ່ຄວາມຕາຍກໍມີຢູ່.

18ເຮົາທັງຫລາຍຮູ້ແລ້ວວ່າຄົນທີ່ເກີດຈາກພຣະເຈົ້າກໍບໍ່ເຮັດບາບຕາມເຄີຍ ແຕ່ພຣະອົງຜູ້ຊົງ
ບັງເກີດແຕ່ພຣະເຈົ້າ ກໍຊົງຮັກສາຄົນນັ້ນແລະມານຮ້າຍບໍ່ຈັບຕ້ອງຄົນນັ້ນ. 19ເຮົາທັງຫລາຍຮູ້
ແລ້ວວ່າພວກເຮົາເກີດຈາກພຣະເຈົ້າ, ມະນຸດສະໂລກທັງໝົດຈົມຢູ່ໃຕ້ອຳນາດຂອງມານຮ້າຍ.
20ເຮົາທັງຫລາຍຮູ້ວ່າພຣະບຸດຂອງພຣະເຈົ້າສະເດັດມາ ແລະໄດ້ຊົງໂຜດປະທານສະຕິປັນຍາ
ໃຫ້ແກ່ພວກເຮົາ ເພື່ອໃຫ້ພວກເຮົາຮູ້ຈັກພຣະຜູ້ຊົງທ່ຽງທຳ ແລະເຮົາທັງຫລາຍຢູ່ໃນພຣະອົງຜູ້ຊົງ
ທ່ຽງແທ້ນັ້ນ ຄືໃນພຣະເຢຊູຄຣິດພຣະບຸດຂອງພຣະອົງນັ້ນ ນີ້ແຫລະ, ເປັນພຣະເຈົ້າອົງທ່ຽງ
ແທ້ແລະເປັນຊີວິດອັນຕະຫລອດໄປເປັນນິດ. 21ລູກນ້ອຍທັງຫລາຍເອີຍ, ຈົ່ງລະວັງຮັກສາຕົວ
ຈາກບັນດາພຣະທຽມ.

* * *

# ຈົດໝາຍຂອງ
# ໂຢຮັນ ສະບັບທີສອງ

1ຈາກ ຂ້າພະເຈົ້າຜູ້ເຖົ້າແກ່ຮຽນ ມາຍັງຍິງທີ່ຊົງເລືອກໄວ້ກັບບັນດາລູກຂອງທ່ານ ຊຶ່ງຂ້າ-
ພະເຈົ້າຮັກເນື່ອງດ້ວຍຄວາມຈິງ ບໍ່ແມ່ນແຕ່ຂ້າພະເຈົ້າຜູ້ດຽວ ແຕ່ຄົນທັງປວງທີ່ຮູ້ຈັກຄວາມຈິງກໍ
ຮັກເໝືອນກັນ. 2ຍ້ອນຄວາມຈິງທີ່ຕັ້ງຢູ່ໃນເຮົາທັງຫລາຍ ແລະຊຶ່ງຈະດຳລົງຢູ່ກັບພວກເຮົາສືບໆ
ໄປເປັນນິດ. 3ພຣະຄຸນ, ພຣະເມດຕາ, ແລະສັນຕິສຸກທີ່ມາຈາກພຣະເຈົ້າພຣະບິດາ ແລະຈາກ
ພຣະເຢຊູຄຣິດພຣະບຸດຂອງພຣະບິດານັ້ນ ຈະສະຖິດຢູ່ກັບເຮົາທັງຫລາຍໃນຄວາມຈິງແລະໃນ
ຄວາມຮັກ.

## ຕັ້ງຢູ່ໃນຫລັກຄຳສອນຂອງພຣະຄຣິດ

4ຂ້າພະເຈົ້າໄດ້ມີຄວາມຍິນດີຢ່າງຫລວງຫລາຍ ເພາະໄດ້ພົບລູກຂອງທ່ານລາງຄົນດຳເນີນຊີ-
ວິດຕາມຄວາມຈິງ ຕາມທີ່ເຮົາທັງຫລາຍໄດ້ຮັບຂໍ້ບັນຍັດຈາກພຣະບິດາ.

5ທ່ານຍິງເອີຍ, ຂ້າພະເຈົ້າຂໍເຊີນທ່ານໃຫ້ເຮົາທັງຫລາຍຮັກເຊິ່ງກັນແລະກັນ ບໍ່ແມ່ນເໝືອນ
ກັບວ່າເຮົາໄດ້ຂຽນຂໍ້ບັນຍັດໃໝ່ມາຍັງທ່ານ ແຕ່ເປັນຂໍ້ບັນຍັດທີ່ພວກເຮົາໄດ້ມີມາແລ້ວຕັ້ງແຕ່
ເດີມ. 6ນີ້ແຫລະ, ເປັນຄວາມຮັກ ຄືໃຫ້ເຮົາທັງຫລາຍປະຕິບັດຕາມບັນດາຂໍ້ບັນຍັດຂອງພຣະອົງ
ນີ້ແຫລະ, ເປັນຂໍ້ບັນຍັດທີ່ທ່ານທັງຫລາຍໄດ້ຍິນໄດ້ຟັງຕັ້ງແຕ່ຕົ້ນເດີມນັ້ນ ເພື່ອພວກທ່ານຈະໄດ້
ປະຕິບັດຕາມ. 7ເພາະວ່າມີຜູ້ຫລອກລວງເປັນຈຳນວນຫລາຍໄດ້ອອກໄປໃນໂລກແລ້ວ ຄົນ
ເຫລົ່ານີ້ບໍ່ຍອມຮັບວ່າພຣະເຢຊູຄຣິດໄດ້ສະເດັດລົງມາຮັບຊາດເປັນມະນຸດ ຄົນນັ້ນແຫລະ, ເປັນ
ຜູ້ຫລອກລວງແລະເປັນຜູ້ຕໍ່ສູ້ພຣະຄຣິດ. 8ທ່ານທັງຫລາຍຈົ່ງລະວັງຕົວໃຫ້ດີ ເພື່ອພວກທ່ານຈະ
ບໍ່ເສຍຜົນປະໂຫຍດໃນການເຮັດຂອງຕົນ ແຕ່ເພື່ອພວກທ່ານຈະໄດ້ຮັບບຳເໜັດເຕັມສ່ວນ.

9ຜູ້ໃດລ່ວງເກີນແລະບໍ່ດຳລົງຢູ່ໃນພຣະໂອວາດຂອງພຣະຄຣິດຜູ້ນັ້ນກໍບໍ່ມີພຣະເຈົ້າ, ຜູ້ໃດ
ດຳລົງຢູ່ໃນພຣະໂອວາດນີ້ ຜູ້ນັ້ນແຫລະ, ທັງມີພຣະບິດາແລະມີພຣະບຸດ. 10ຖ້າຜູ້ໃດມາຫາ
ພວກທ່ານແລະບໍ່ຖືພຣະໂອວາດນີ້ມານຳຢ່າຮັບຜູ້ນັ້ນໄວ້ໃນເຮືອນແລະຢ່າສະແດງຄວາມຄຳນັບຕໍ່
ຜູ້ນັ້ນ. 11ເພາະວ່າຜູ້ທີ່ສະແດງຄວາມຄຳນັບຕໍ່ເຂົາ ກໍເຂົ້າສ່ວນໃນການຊົ່ວຂອງເຂົາ.

## ຄຳສະແດງຄວາມນັບຖືຕອນທ້າຍ

12ຂ້າພະເຈົ້າຍັງມີຂໍ້ຄວາມອີກຫລາຍຂໍ້ທີ່ຈະຂຽນເຖິງທ່ານທັງຫລາຍ ແຕ່ກໍບໍ່ຢາກໃຊ້ເຈ້ຍ
ແລະນ້ຳໝຶກຂຽນ ແຕ່ຂ້າພະເຈົ້າຫວັງວ່າຈະມາຫາພວກທ່ານແລະສົນທະນາກັນປາກຕໍ່ປາກ
ເພື່ອຄວາມຍິນດີຂອງພວກເຮົາຈະໄດ້ຄົບເຕັມ.

13ບັນດາລູກນ້ອງສາວຂອງທ່ານທີ່ຊົງເລືອກໄວ້ນັ້ນ ກໍຝາກຄວາມຄິດເຖິງມາຍັງທ່ານ.

* * *

# ຈົດໝາຍຂອງ
# ໂຢຮັນ ສະບັບທີສາມ

[1]ຈາກ ຂ້າພະເຈົ້າຜູ້ເຖົ້າແກ່ຮຽນ ທ່ານຄາໂຢທີ່ຮັກ ຜູ້ຊຶ່ງຂ້າພະເຈົ້າຮັກເນື່ອງດ້ວຍຄວາມຈິງ.
[2]ທ່ານທີ່ຮັກເອີຍ, ຂ້າພະເຈົ້າອ້ອນວອນຂໍໃຫ້ທ່ານຈະເລີນດີຂຶ້ນໃນທຸກສິ່ງ ແລະມີສຸຂະພາບ
ແຂງແຮງເໝືອນຢ່າງຈິດວິນຍານຂອງທ່ານຈະເລີນດີຂຶ້ນຢູ່ນັ້ນ. [3]ເພາະວ່າຂ້າພະເຈົ້າມີຄວາມ
ຍິນດີຫລາຍ ເມື່ອພວກພີ່ນ້ອງລາງຄົນໄດ້ມາແລະເປັນພະຍານເຖິງຄວາມສັດຈິງຂອງທ່ານ
ເໝືອນຢ່າງທ່ານໄດ້ປະຕິບັດຕາມຄວາມສັດຈິງນັ້ນ.
[4]ບໍ່ມີອັນໃດທີ່ເຮັດໃຫ້ຂ້າພະເຈົ້າຍິນດີຫລາຍກວ່ານີ້ ຄືທີ່ໄດ້ຍິນວ່າລູກທັງຫລາຍຂອງຂ້າພະ-
ເຈົ້າປະຕິບັດຕາມຄວາມສັດຈິງ.

### ຊົມເຊີຍຄາໂຢໃນການຕ້ອນຮັບແຂກ

[5]ທ່ານທີ່ຮັກເອີຍ, ເມື່ອທ່ານສະຫລະເຫື່ອແຮງໃຫ້ພວກພີ່ນ້ອງ ເປັນຕົ້ນວ່າໃຫ້ແກ່ແຂກທີ່ມາ
ເຮືອນກໍເປັນທີ່ສະແດງເຖິງຄວາມຈິງຮັກພັກດີຂອງທ່ານ. [6]ເຂົາເຫລົ່ານັ້ນໄດ້ເປັນພະຍານຕໍ່
ຄຣິສຕະຈັກໃນເລື່ອງຄວາມຮັກຂອງທ່ານ ຖ້າທ່ານຈະຊ່ອຍສົ່ງເຂົາເຫລົ່ານັ້ນໃຫ້ສົມກັບການປະ-
ຕິບັດພຣະເຈົ້າ ທ່ານກໍເຮັດດີ. [7]ເພາະເຂົາເຫລົ່ານັ້ນໄດ້ອອກໄປເພາະເຫັນແກ່ພຣະນາມຂອງ
ພຣະອົງ ແລະບໍ່ໄດ້ຮັບສິ່ງໃດຈາກຄົນນອກ. [8]ສັນນັ້ນ, ຝ່າຍເຮົາທັງຫລາຍຈຳເປັນຕ້ອງສະໜັບ-
ສະໜູນອູ້ມຊູຄົນຢ່າງນັ້ນເພື່ອພວກເຮົາຈະກາຍເປັນຜູ້ຮ່ວມງານກັນໃນຄວາມຈິງ.

### ການຂັດຂວາງຂອງດີໂອເທເຟ

[9]ຂ້າພະເຈົ້າໄດ້ຂຽນບາງສິ່ງບາງຢ່າງເຖິງຄຣິສຕະຈັກ ແຕ່ດີໂອເທເຟ ຜູ້ມັກຕັ້ງຕົວເປັນໃຫຍ່
ເໜືອໝູ່ກໍບໍ່ຍອມຮັບເຮົາ. [10]ສັນນັ້ນ, ຖ້າຂ້າພະເຈົ້າມາ ຂ້າພະເຈົ້າຈະເຜີຍການທີ່ລາວເຮັດ ຄືທີ່
ລາວໄດ້ກ່າວໃສ່ຮ້າຍຕໍ່ຂ້າພະເຈົ້າດ້ວຍຄວາມບໍ່ມີແກ່ນສານ ແລະເທົ່ານັ້ນຍັງບໍ່ສົມໃຈ ຊໍ້າບໍ່ໜຳ
ລາວຍັງປະຕິເສດ, ບໍ່ຍອມຮັບຕ້ອນພີ່ນ້ອງເຫລົ່ານັ້ນ ແລ້ວຍັງກີດກັນຄົນທັງຫລາຍທີ່ຢາກຮັບ
ຕ້ອນເຂົາ ກັບທັງຕັດເຂົາອອກເສຍຈາກຄຣິສຕະຈັກ.

### ຄຳພະຍານອັນດີກ່ຽວເລື່ອງເດເມທີໂອ

[11]ທ່ານທີ່ຮັກເອີຍ, ຢ່າເອົາການຊົ່ວຮ້າຍເປັນແບບຢ່າງ ແຕ່ຈົ່ງເອົາການດີງາມ ຜູ້ທີ່ເຮັດການ
ດີ ກໍເປັນຂອງພຣະເຈົ້າ ຜູ້ທີ່ເຮັດການຊົ່ວກໍບໍ່ໄດ້ເຫັນພຣະເຈົ້າ.
[12]ສ່ວນເດເມທີໂອນັ້ນ ທຸກຄົນກໍເປັນພະຍານວ່າເພິ່ນເປັນຄົນດີ ແລະຄວາມຈິງເອງກໍເປັນ
ພະຍານ ຝ່າຍຂ້າພະເຈົ້າກໍເປັນພະຍານເໝືອນກັນ ແລະທ່ານຮູ້ແລ້ວວ່າຄຳພະຍານຂອງຂ້າພະ-
ເຈົ້າກໍເປັນຈິງ.

### ຄຳສະແດງຄວາມນັບຖືຕອນທ້າຍ

[13]ຂ້າພະເຈົ້າມີຂໍ້ຄວາມຫລາຍຂໍ້ທີ່ຈະຂຽນມາເຖິງທ່ານ ແຕ່ບໍ່ຢາກຂຽນດ້ວຍປາກກາແລະນໍ້າ-

ໝຶກ. 14ຂ້າພະເຈົ້າຫວັງວ່າຈະໄດ້ເຫັນທ່ານໃນໄວໆ ນີ້ແລະຈະໄດ້ເວົ້າກັນປາກຕໍ່ປາກ. 15ຂໍສັນ-
ຕິສຸກຈົ່ງມີແກ່ທ່ານ ບັນດາສະຫາຍທາງນີ້ກໍຝາກຄວາມຄິດເຖິງມາຍັງທ່ານ ຂໍທ່ານໄດ້ຝາກ
ຄວາມຄິດເຖິງນີ້ແກ່ບັນດາສະຫາຍທາງພຸ້ນດ້ວຍອອກຊື່ຂອງທຸກຄົນ.

* * *

# ຈົດໝາຍຂອງ
# ຢູດາ

1ຈາກ ຢູດາ ຜູ້ເປັນຂ້ອຍຂ້າຂອງ ພຣະເຢຊູຄຣິດ ແລະເປັນນ້ອງຊາຍຂອງຢາໂກໂບ ຮຽນ
ຄົນທັງຫລາຍທີ່ຊົງເອີ້ນໄວ້ແລ້ວ, ຜູ້ຊຶ່ງເປັນທີ່ຮັກໃນ ພຣະເຈົ້າ ພຣະບິດາ, ແລະຜູ້ຊຶ່ງຊົງຮັກສາ
ໄວ້ເພື່ອ ພຣະເຢຊູຄຣິດ. 2ຂໍພຣະເມດຕາ, ສັນຕິສຸກ, ແລະຄວາມຮັກຈົ່ງເພີ່ມທະວີຄູນແກ່ທ່ານ
ທັງຫລາຍເທີນ.

## ການພິພາກສາລົງໂທດຄູສອນປອມ

*(II ເປໂຕ 2:1-17)*

3ພວກທີ່ຮັກເອີຍ, ຂ້າພະເຈົ້າພະຍາຍາມຈະຂຽນມາເຖິງທ່ານທັງຫລາຍ ກ່ຽວເລື່ອງຄວາມ
ລອດພົ້ນທີ່ພວກເຮົາມີຢູ່ຮ່ວມກັນ ແຕ່ຂ້າພະເຈົ້າເຫັນວ່າຈຳເປັນຈະຕ້ອງຂຽນເຕືອນສະຕິພວກ
ທ່ານ ໃຫ້ຕໍ່ສູ້ເພື່ອຫລັກຄຳສອນທີ່ຊົງມອບໄວ້ກັບໄພ່ພົນຂອງ ພຣະເຈົ້າ ເທື່ອດຽວເປັນການສິ້ນ
ສຸດ. 4ເພາະວ່າມີລາງຄົນໄດ້ແອບແຝງເຂົ້າມາ ຊຶ່ງພຣະຄຳພີໄດ້ບົ່ງໄວ້ແຕ່ດົນນານແລ້ວວ່າ ເຂົາ
ຈະຖືກພິພາກສາລົງໂທດຢ່າງນີ້ ເຂົາເຫລົ່ານັ້ນເປັນຄົນບໍ່ນັບຖືພຣະເຈົ້າ, ທີ່ຖືເອົາພຣະຄຸນແຫ່ງ
ພຣະເຈົ້າ ຂອງເຮົາທັງຫລາຍເປັນເຫດໃຫ້ເຮັດຕາມກິເລດຕັນຫາ, ແລະປະຕິເສດ ພຣະເຢຊູຄຣິດ
ຜູ້ຊົງເປັນເຈົ້ານາຍແລະອົງ ພຣະຜູ້ເປັນເຈົ້າ ຂອງພວກເຮົາແຕ່ອົງດຽວ.

5ເຖິງແມ່ນວ່າທ່ານທັງຫລາຍຮູ້ຈັກຄວາມເຫລົ່ານີ້ຕະຫລອດແລ້ວກໍຕາມ ຂ້າພະເຈົ້າກໍປະສົງ
ຢາກໃຫ້ພວກທ່ານລະນຶກເຖິງວ່າ ອົງ ພຣະຜູ້ເປັນເຈົ້າ ໄດ້ຊົງໂຜດໃຫ້ໄພ່ພົນຊາດໜຶ່ງພົ້ນຈາກ
ແຜ່ນດິນ ເອຢິບ ແລ້ວ ພາຍຫລັງຕໍ່ມາໄດ້ຊົງທຳລາຍຄົນເຫລົ່ານັ້ນທີ່ບໍ່ເຊື່ອພຣະອົງເສຍ. 6ແລະ
ບັນດາເທວະດາທີ່ບໍ່ພໍໃຈຮັກສາອຳນາດອະທິປະໄຕທີ່ຊົງປະທານແກ່ຕົນ ແຕ່ໄດ້ປະຖິ້ມຖິ່ນຖານ
ອັນເໝາະສົມຂອງຕົນເສຍ ພຣະອົງໄດ້ຊົງເອົາໂສ້ອັນຕະຫລອດໄປລ່າມເຂົາໄວ້ແລະຂັງໄວ້ໃຕ້ທີ່
ມືດ ຈົນກວ່າຈະເຖິງເວລາພິພາກສາໃນວັນສຳຄັນອັນໃຫຍ່ນັ້ນ. 7ຢ່າງດຽວກັນກັບເມືອງ ໂຊໂດມ
ແລະ ເມືອງ ໂກໂມຣາ ທັງເມືອງທີ່ຢູ່ອ້ອມຮອບນັ້ນ ທີ່ໄດ້ມອບຕົວໄວ້ແກ່ລາຄະຕັນຫາ ຕິດຕາມ
ການຜິດຊາຍຍິງອັນຜິດທຳມະດາ ກໍປະກົດເປັນຕົວຢ່າງ ໂດຍທົນທຸກທໍລະມານໃນໄຟອັນຕະ-
ຫລອດໄປເປັນນິດ.

8ເຖິງປານນັ້ນເຂົາເຫລົ່ານີ້ກໍຍັງມົວຝັນ ເຮັດໃຫ້ເນື້ອກາຍຂອງຕົນຊົ່ວມົວໝອງ, ໝິ່ນປະໝາດ
ຕໍ່ອຳນາດຂອງຜູ້ໃຫຍ່, ແລະເວົ້າຫຍາບຊ້າຕໍ່ຜູ້ມີຍົດສັກ. 9ແຕ່ເຖິງແມ່ນ ມີກາເອນ ຜູ້ເປັນອັກ
ຄະເສນາບໍດີຝ່າຍເທວະດາ, ຄັ້ງເມື່ອຖຽງກັນກັບມານ ຄືຕໍ່ວ່າເລື່ອງສົບຂອງ ໂມເຊ ນັ້ນ ເພິ່ນກໍ
ຍັງບໍ່ບັງອາດກ່າວໂທດດ້ວຍຄຳຫຍາບຊ້າຕໍ່ມານ ແຕ່ໄດ້ກ່າວວ່າ, “ຂໍໃຫ້ອົງ ພຣະຜູ້ເປັນເຈົ້າ ຕິ
ເຈົ້າເທີນ.” 10ແຕ່ຝ່າຍຄົນເຫລົ່ານີ້, ເຂົາເວົ້າຫຍາບຊ້າຕໍ່ທຸກສິ່ງທີ່ເຂົາບໍ່ຮູ້ ແລະທຸກສິ່ງທີ່ເຂົາຮູ້-
ສຶກຕາມວິໄສເໝືອນສັດເດຍລະສານທີ່ບໍ່ມີຄວາມຄຶດ ເຂົາຈະຕ້ອງເສື່ອມສູນໄປດ້ວຍສິ່ງນັ້ນ.
11ວິບັດຈົ່ງມີແກ່ເຂົາ ເພາະເຂົາໄດ້ຕິດຕາມທາງຂອງ ກາອິນ ໄປ ເຂົາໄດ້ປ່ອຍຕົວໄປຕາມທາງ

ຜິດຂອງບາລາອາມ ເພາະເຫັນແກ່ສິນຈ້າງ ແລະໄດ້ຈິບຫາຍໄປດ້ວຍການກະບົດຕາມຢ່າງ
ໂກຣາ. [12]ຄົນເຫລົ່ານີ້ເປັນດ່າງພ້ອຍໃນການກິນລ້ຽງຜູກພັນຄວາມຮັກຂອງທ່ານທັງຫລາຍ
ເພາະເຂົາຮ່ວມລ້ຽງກັນຢ່າງເຖິງໃຈໂດຍບໍ່ມີຄວາມລະອາຍ ເຂົາເປັນຜູ້ລ້ຽງແກະທີ່ລ້ຽງແຕ່ຕົວ
ເອງ, ເປັນເໝືອນເມກບໍ່ມີນ້ຳທີ່ຖືກໄຫລໄປຕາມລົມ, ເປັນເໝືອນຕົ້ນໄມ້ບໍ່ມີຜົນໃນທ້າຍລະດູ ທີ່
ຕາຍໄປສອງເທື່ອແລ້ວ ແລະທີ່ກົ່ນແລ້ວ. [13]ເຂົາເປັນເໝືອນຟອງນ້ຳອັນຮ້າຍແຮງໃນມະຫາສະ-
ໝຸດ ທີ່ພົ່ນຄວາມຂີ້ດຽດຂອງຕົນອອກດັ່ງປູມປວກ, ເປັນດາວທີ່ຫລົງທາງໄປນອກວົງໂຄຈອນ
ມີຄວາມມືດອັນໜາແໜ້ນໄດ້ຊົງຈັດໄວ້ຖ້າເຂົາຕະຫລອດໄປເປັນນິດ.
[14]ດ້ວຍວ່າເອໂນກ ຜູ້ທີເຈັດນັບຈາກອາດາມມາ ໄດ້ທຳນວາຍເຖິງຄົນເຫລົ່ານີ້ເໝືອນກັນ
ວ່າ, "ເບິ່ງແມ, ອົງພຣະຜູ້ເປັນເຈົ້າໄດ້ສະເດັດມາພ້ອມກັບໄພ່ພົນຂອງພຣະອົງນັບເປັນໝື່ນໆ.
[15]ເພື່ອຊົງພິພາກສາລົງໂທດຄົນທັງປວງ ແລະຊົງບັນດານໃຫ້ຝູງຄົນທີ່ບໍ່ຢຳເກງພຣະເຈົ້າຮູ້ສຶກ
ຕົວ ເຖິງບັນດາການອະທຳທີ່ເຂົາໄດ້ເຮັດໃນການບໍ່ຢຳເກງພຣະເຈົ້ານັ້ນ ແລະຮູ້ສຶກຕົວເຖິງຄຳ
ຫຍາບຊ້າທີ່ຄົນບາບເຫລົ່ານັ້ນ ຜູ້ບໍ່ຢຳເກງພຣະເຈົ້າໄດ້ກ່າວໃສ່ຮ້າຍຕໍ່ພຣະອົງ." [16]ຄົນເຫລົ່ານີ້
ເປັນຄົນມັກຈົ່ມມັກວ່າ, ເປັນຄົນເຮັດຕາມຄວາມປາດຖະໜາອັນຊົ່ວຂອງຕົນ ປາກຂອງເຂົາກໍ
ອວດອ້າງດ້ວຍຄຳໃຫຍ່ເກີນສ່ວນ ແລະຍ້ອງຍໍຜູ້ອື່ນເພື່ອຫວັງປະໂຫຍດຂອງຕົນ.

## ຄຳເຕືອນແລະຄຳຊັກຊວນ

[17]ແຕ່ຝ່າຍທ່ານທີ່ຮັກທັງຫລາຍເອີຍ, ຈົ່ງລະນຶກເຖິງຂໍ້ຄວາມທີ່ພວກອັກຄະສາວົກຂອງພຣະ-
ເຢຊູຄຣິດເຈົ້າຂອງເຮົາທັງຫລາຍໄດ້ກ່າວໄວ້ກ່ອນ. [18]ຄືເຂົາເຄີຍບອກພວກທ່ານວ່າ, "ໃນສະ-
ໄໝສຸດທ້າຍຈະມີຄົນເຍາະເຍີ້ຍບັງເກີດຂຶ້ນ ທີ່ຈະເຮັດຕາມຄວາມປາດຖະໜາຂອງຕົນເອງຢ່າງ
ບໍ່ຢຳເກງພຣະເຈົ້າ. [19]ແມ່ນຄົນເຫລົ່ານີ້ແຫລະ, ທີ່ເຮັດໃຫ້ແຕກແຍກຈາກກັນ ເປັນຄົນມີນິໄສ
ຕາມທຳມະດາໂລກແລະບໍ່ມີພຣະວິນຍານ. [20]ແຕ່ຝ່າຍທ່ານທີ່ຮັກທັງຫລາຍເອີຍ, ຈົ່ງສ້າງຕົວ
ເອງຂຶ້ນເທິງຄວາມເຊື່ອອັນສັກສິດທີ່ສຸດຂອງພວກທ່ານ ແລະຈົ່ງອ້ອນວອນໃນພຣະວິນຍານບໍ-
ລິສຸດ. [21]ຈົ່ງຮັກສາຕົວໄວ້ໃນຄວາມຮັກຂອງພຣະເຈົ້າ ລໍຄອຍພຣະກະລຸນາຂອງພຣະເຢຊູຄຣິດ
ເຈົ້າຂອງເຮົາທັງຫລາຍ ຈົນກວ່າຈະໄດ້ຊີວິດອັນຕະຫລອດໄປເປັນນິດ. [22]ຈົ່ງສະແດງຄວາມ
ເມດຕາຕໍ່ລາງຄົນທີ່ຍັງສົງໃສ. [23]ຈົ່ງຍາດບາງຄົນໃຫ້ພົ້ນດ້ວຍດຶງເຂົາອອກຈາກໄຟ ຈົ່ງເມດຕາ
ອີກບາງຄົນດ້ວຍຄວາມຈຽມຕົວ ແລະຈົ່ງໜ່າຍຊັງຍັງເສື້ອຜ້າທີ່ເປື້ອນເປິດ້ວຍລາຄະຕັນຫາ.

## ຄຳຖວາຍພຣະກຽດ

[24]ອັນໜຶ່ງ, ຈົ່ງມີພຣະກຽດ, ພຣະເດຊານຸພາບ, ພຣະອານຸພາບ, ແລະສັກດານຸພາບ ແດ່
ພຣະອົງ ຜູ້ຊົງສາມາດປ້ອງກັນຮັກສາທ່ານທັງຫລາຍບໍ່ໃຫ້ສະດຸດລົ້ມລົງແລະຊົງສາມາດຕັ້ງ
ທ່ານທັງຫລາຍ ໃຫ້ໝັ້ນຢູ່ຕໍ່ພຣະພັກອັນຮຸ່ງເຮືອງຂອງພຣະອົງ ໃຫ້ປາສະຈາກຕຳໜິແລະມີ
ຄວາມຍິນດີອັນເຫລືອລົ້ນ. [25]ຄືແດ່ພຣະອົງ ຜູ້ຊົງເປັນພຣະເຈົ້າອົງດຽວ ພຣະຜູ້ຊົງໂຜດໃຫ້ພົ້ນ
ຂອງເຮົາທັງຫລາຍ ດ້ວຍພຣະເຢຊູຄຣິດ ພຣະຜູ້ເປັນເຈົ້າຂອງພວກເຮົາ ທັງໃນອະດີດ, ປັດ-
ຈຸບັນ, ແລະໃນອະນາຄົດຕະຫລອດໄປເປັນນິດ ອາແມນ.

* * *

# ພຣະນິມິດ
# ຊຶ່ງຊົງສະແດງຕໍ່ ໂຢຮັນ

## ບົດທີ 1

### ຄຳນຳ

[1]ການຊົງສະແດງຂອງ ພຣະເຢຊູຄຣິດ ຊຶ່ງ ພຣະເຈົ້າ ໄດ້ຊົງປະທານ ແກ່ພຣະອົງ ເພື່ອຊົງຊີ້
ແຈງໃຫ້ບັນດາຂ້ອຍໃຊ້ຂອງພຣະອົງຮູ້ເຖິງ ເຫດການທັງຫລາຍ ທີ່ຕ້ອງບັງເກີດຂຶ້ນໃນບໍ່ຊ້ານີ້
ພຣະຄຣິດ ໄດ້ຊົງໃຊ້ເທວະດາຂອງພຣະອົງໄປສະແດງໝາຍສຳຄັນແກ່ ໂຢຮັນ ຂ້ອຍໃຊ້ຂອງ
ພຣະອົງ. [2]ໂຢຮັນ ເປັນພະຍານຝ່າຍພຣະທຳຂອງ ພຣະເຈົ້າ ແລະຝ່າຍຄຳພະຍານຂອງ ພຣະ-
ເຢຊູຄຣິດ ທ່ານເປັນພະຍານໃນເຫດການທັງສິ້ນຊຶ່ງທ່ານໄດ້ເຫັນນັ້ນ. [3]ບັນດາຜູ້ອ່ານແລະຜູ້ຟັງ
ຄຳທຳນວາຍເຫລົ່ານີ້ແລະບັນດາຜູ້ທີ່ຖືຮັກສາຂໍ້ຄວາມທີ່ຂຽນໄວ້ນີ້ກໍເປັນສຸກ ເພາະວ່າເວລານັ້ນ
ໃກ້ເຂົ້າມາແລ້ວ.

### ຄຳສະແດງຄວາມຄຳນັບຖືເຖິງຄຣິສຕະຈັກທັງເຈັດ

[4]ຈາກ ໂຢຮັນຮຽນ ຄຣິສຕະຈັກທັງເຈັດທີ່ຢູ່ໃນແຂວງອາເຊຍຂໍໃຫ້ທ່ານທັງຫລາຍຈົ່ງໄດ້ຮັບ
ພຣະຄຸນແລະສັນຕິສຸກຈາກພຣະອົງ ຜູ້ຊົງດຳລົງຢູ່ໃນປັດຈຸບັນ, ຜູ້ຊົງດຳລົງຢູ່ໃນອະດີດ, ຜູ້ຈະ
ສະເດັດມາໃນອະນາຄົດ ແລະຈາກວິນຍານທັງເຈັດທີ່ເຝົ້າຢູ່ໜ້າລາຊະບັນລັງຂອງພຣະອົງ.
[5]ແລະຈາກພຣະເຢຊູຄຣິດຜູ້ຊົງເປັນພະຍານທີ່ສັດຊື່ ແລະຊົງເປັນຜູ້ແຮກທີ່ໄດ້ຄືນມາຈາກຄວາມ
ຕາຍ ກັບທັງຊົງຄອບຄອງກະສັດທັງຫລາຍໃນໂລກ. ພຣະອົງຊົງຮັກເຮົາທັງຫລາຍ ແລະໄດ້ຊົງ
ປົດປ່ອຍພວກເຮົາຈາກການຜິດບາບດ້ວຍພຣະໂລຫິດຂອງພຣະອົງ. [6]ພຣະອົງຊົງຕັ້ງເຮົາທັງ-
ຫລາຍໄວ້ໃຫ້ເປັນອານາຈັກແລະເປັນປະໂລຫິດຂອງພຣະອົງ ພຣະກຽດແລະພຣະອານຸພາບຈົ່ງ
ມີແດ່ພຣະອົງສືບໆ ໄປເປັນນິດ ອາແມນ.

[7] ເບິ່ງແມ, ພຣະອົງຈະສະເດັດມາມີເມກເປັນຂະບວນແຫ່ ຕາທຸກໜ່ວຍຈະເຫັນພຣະອົງ
ແລະຄົນເຫລົ່ານັ້ນທີ່ໄດ້ແທງພຣະອົງຈະເຫັນເໝືອນກັນ
ມະນຸດທຸກຊາດທົ່ວໂລກຈະຮ້ອງໄຫ້ຮ່ຳໄຮເພາະພຣະອົງ
ຈະເປັນໄປຢ່າງນັ້ນ ອາແມນ.

[8]ອົງພຣະຜູ້ເປັນເຈົ້າ ຜູ້ຊົງດຳລົງຢູ່ໃນປັດຈຸບັນ, ຜູ້ຊົງດຳລົງຢູ່ໃນອະດີດ, ຜູ້ຈະສະເດັດມາ
ໃນອະນາຄົດ, ແລະຜູ້ຊົງລິດທານຸພາບສູງສຸດ ຊົງກ່າວວ່າ, "ຝ່າຍເຮົາຄືອາລະຟາ ແລະ ໂອເມ-
ຄາ."

### ນິມິດເຫັນບຸດມະນຸດ

[9]ຂ້າພະເຈົ້າ, ຄືໂຢຮັນ ພີ່ນ້ອງຂອງທ່ານທັງຫລາຍ ຜູ້ເປັນເພື່ອນຮ່ວມການຍາກລຳບາກ,
ຮ່ວມລາຊະອານາຈັກ, ແລະຮ່ວມຄວາມພຽນອົດທົນຊຶ່ງເປັນປະສົບການໃນ ພຣະເຢຊູ ຂ້າພະ-

ເຈົ້າໄດ້ມາຢູ່ທີ່ເກາະ ປັດໂມ ເນື່ອງດ້ວຍພຣະທຳຂອງ ພຣະເຈົ້າ ແລະເນື່ອງດ້ວຍການເປັນພະ-
ຍານຝ່າຍ ພຣະເຢຊູ. 10ໃນວັນຂອງອົງ ພຣະຜູ້ເປັນເຈົ້າ ຂ້າພະເຈົ້າປະກອບໄປດ້ວຍ ພຣະວິນ-
ຍານ ແລ້ວໄດ້ຍິນພຣະສຸລະສຽງດັ່ງມາເບື້ອງຫລັງຂ້າພະເຈົ້າເໝືອນດັ່ງສຽງແກ. 11ຊົງກ່າວວ່າ,
"ອັນທີ່ທ່ານໄດ້ເຫັນນັ້ນຈົ່ງຂຽນໄວ້ໃນໜັງສືມ້ວນ ແລ້ວຝາກໄປໃຫ້ຄຣິສຕະຈັກທັງເຈັດ ຄືຄຣິສ-
ຕະຈັກທີ່ເມືອງ ເອເຟໂຊ, ເມືອງ ຊະມີນາ, ເມືອງ ເປຄາໂມ, ເມືອງ ທົວເຕຣາ, ເມືອງ ຊາເດ,
ເມືອງ ຟີລາເດັນເຟຍ, ແລະທີ່ເມືອງ ລາວດີເກອາ."

12ຂ້າພະເຈົ້າຈິ່ງຫລຽວຫລັງເບິ່ງທາງພຣະສຸລະສຽງທີ່ຊົງກ່າວແກ່ຂ້າພະເຈົ້ານັ້ນ ຄັນແລ້ວຂ້າ-
ພະເຈົ້າກໍເຫັນ ເຄື່ອງຮອງຕີນ ໂຄມທອງຄຳ ເຈັດອັນ. 13ແລະ ໃນຖ້າມກາງ ເຄື່ອງຮອງຕີນ ໂຄມ
ເຫລົ່ານັ້ນມີຜູ້ໜຶ່ງເໝືອນບຸດມະນຸດ ຊົງສວມເຄື່ອງສະຫລອງກວມພຣະບາດ ແລະຊົງຮັດສາຍ
ປະຄົດທອງຄຳທີ່ພຣະອຸຣະຂອງພຣະອົງ. 14ພຣະສຽນແລະພຣະເກສາຂອງພຣະອົງຂາວເໝືອນ
ຂົນແກະສີຂາວ ແລະເໝືອນດັ່ງຫິມະ ພຣະເນດຂອງພຣະອົງເໝືອນດັ່ງແປວໄຟ. 15ພຣະບາດ
ຂອງພຣະອົງເໝືອນດັ່ງທອງເຫລືອງກັ່ງ ເໝືອນກັບວ່າໄດ້ຫລອມໃຫ້ບໍລິສຸດແລ້ວ ພຣະສຸລະ-
ສຽງຂອງພຣະອົງເໝືອນສຽງນ້ຳມາກ. 16ພຣະຫັດກ້ຳຂວາຂອງພຣະອົງຊົງຖືດາວເຈັດດວງ ມີ
ພຣະແສງສອງຄົມອອກມາຈາກພຣະໂອດ ແລະພຣະພັກຂອງພຣະອົງເໝືອນດັ່ງດວງອາທິດທີ່
ສ່ອງແສງກ້າ. 17ເມື່ອຂ້າພະເຈົ້າໄດ້ເຫັນພຣະອົງ ຂ້າພະເຈົ້າກົ້ມລົງແທບພຣະບາດຂອງພຣະອົງ
ເໝືອນດັ່ງຄົນທີ່ຕາຍແລ້ວ ແຕ່ພຣະອົງຊົງຢຽດພຣະຫັດກ້ຳຂວາບາຍຂ້າພະເຈົ້າ ແລ້ວຊົງກ່າວ
ວ່າ, "ຢ່າຊູ່ຢ້ານ ຝ່າຍເຮົາເປັນຜູ້ຕົ້ນແລະເປັນຜູ້ປ່າຍ. 18ແລະເປັນຜູ້ມີຊີວິດຢູ່ ເຮົາໄດ້ຕາຍແລ້ວ
ແຕ່ເບິ່ງແມ, ເຮົາກໍມີຊີວິດຢູ່ຕະຫລອດໄປເປັນນິດ ແລະເຮົາຖືຂໍກະແຈແຫ່ງຄວາມຕາຍແລະ
ແຫ່ງແດນມໍລະນາ. 19ເຫດສັນນີ້ຈົ່ງຂຽນເຫດການທັງຫລາຍທີ່ເຈົ້າໄດ້ເຫັນ ຄືເຫດການທີ່ເປັນຢູ່
ດຽວນີ້ ກັບທັງເຫດການທີ່ຈະເກີດຂຶ້ນໃນພາຍໜ້າເໝືອນກັນ. 20ສ່ວນຄວາມເລິກລັບຂອງດວງ
ດາວທັງເຈັດທີ່ເຈົ້າໄດ້ເຫັນໃນມືເບື້ອງຂວາຂອງເຮົາ ແລະເຄື່ອງຮອງຕີນໂຄມທອງຄຳທັງເຈັດ
ນັ້ນ ກໍຄືດາວເຈັດດວງນັ້ນໄດ້ແກ່ທູດຂອງ ພຣະເຈົ້າ ໃນຄຣິສຕະຈັກທັງເຈັດແລະເຄື່ອງຮອງຕີນ
ໂຄມທັງເຈັດນັ້ນໄດ້ແກ່ຄຣິສຕະຈັກທັງເຈັດ.

# ບົດທີ 2

## ຂຽນໄປເຖິງຄຣິສຕະຈັກເມືອງເອເຟໂຊ

1"ຈົ່ງຂຽນໄປຍັງທູດຂອງ ພຣະເຈົ້າ ໃນຄຣິສຕະຈັກທີ່ເມືອງ ເອເຟໂຊວ່າ, 'ພຣະອົງຜູ້ຊົງຖືດາວ
ທັງເຈັດໄວ້ໃນພຣະຫັດເບື້ອງຂວາ ແລະສະເດັດໄປມາໃນຖ້າມກາງເຄື່ອງຮອງຕີນໂຄມທອງຄຳ
ທັງເຈັດນັ້ນ ຊົງກ່າວດັ່ງນີ້ວ່າ,

2"'ເຮົາຮູ້ຈັກການກະທຳຂອງເຈົ້າ, ຮູ້ຈັກຄວາມເໝືອຍຍາກແລະຄວາມພຽນອົດທົນຂອງເຈົ້າ
ແລະຮູ້ຈັກວ່າເຈົ້າບໍ່ສາມາດທົນຕໍ່ຄົນຊົ່ວ ເຈົ້າໄດ້ລອງໃຈຄົນເຫລົ່ານັ້ນທີ່ອວດວ່າເປັນອັກຄະສາ-
ວົກ ແຕ່ເຂົາບໍ່ເປັນ ແລະເຈົ້າເຫັນວ່າເຂົາເປັນຄົນປອມ. 3ເຮົາຮູ້ວ່າເຈົ້າຍັງມີຄວາມອົດທົນແລະ
ໄດ້ອົດເອົາເພາະເຫັນແກ່ນາມຂອງເຮົາ ແລະໄດ້ເມື່ອຍລ້າໄປ. 4ແຕ່ເຮົາມີຂໍ້ຕໍ່ວ່າເຈົ້າ ຄືເຈົ້າໄດ້

ປະຖິ້ມຄວາມຮັກເດີມຂອງເຈົ້າເສຍ. [5]ເຫດສັນນັ້ນຈົ່ງລະນຶກວ່າເຈົ້າໄດ້ຕົກຈາກສະພາບໃດ
ແລ້ວຈົ່ງກັບໃຈເສຍໃໝ່ແລະເຮັດຕາມຢ່າງເດີມ ຖ້າບໍ່ດັ່ງນັ້ນເຮົາຈະມາຫາເຈົ້າ ແລະຈະຍົກ
ເຄື່ອງຮອງຕີນໂຄມຂອງເຈົ້າອອກຈາກບ່ອນມັນ ເວັ້ນໄວ້ແຕ່ເຈົ້າຈະກັບໃຈເສຍໃໝ່. [6]ດີແຕ່ເຈົ້າ
ຍັງມີສິ່ງນີ້ ຄືເຈົ້າກຽດຊັງກິດຈະການຂອງພວກນີໂກລາຍເຕ ຊຶ່ງເຮົາເອງກໍກຽດຊັງເໝືອນກັນ.
[7]ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ ຜູ້ໃດມີໄຊຊະນະ
ເຮົາຈະໃຫ້ຜູ້ນັ້ນກິນໝາກຈາກຕົ້ນໄມ້ສຳລັບຊີວິດຊຶ່ງຢູ່ໃນເທບອຸທະຍານຂອງພຣະເຈົ້າ'."

## ຂຽນໄປເຖິງຄຣິສຕະຈັກເມືອງຊະມີນາ

[8]"ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງຊະມີນາວ່າ, 'ພຣະອົງຜູ້ຊົງເປັນຜູ້
ຕົ້ນແລະເປັນຜູ້ປາຍ, ຜູ້ຊົງສິ້ນພຣະຊົນແລ້ວກັບຄືນມາອີກ ໄດ້ຊົງກ່າວດັ່ງນີ້ວ່າ,
[9]"'ເຮົາຮູ້ວ່າເຈົ້າມີຄວາມທຸກລຳບາກແລະຍາກຈົນ (ແຕ່ວ່າເຈົ້າກໍຮັ່ງມີ) ແລະຮູ້ຄວາມໝິ່ນປະ-
ໝາດຂອງຄົນເຫລົ່ານັ້ນທີ່ເວົ້າວ່າເຂົາເປັນພວກຢິວ ແລະເຂົາບໍ່ເປັນແຕ່ພວກເຂົາເປັນພັກພວກ
ຂອງຊາຕານ. [10]ຢ່າຊູ່ຢ້ານຄວາມທຸກທໍລະມານທີ່ເຈົ້າຈວນຈະໄດ້ຮັບນັ້ນ ເບິ່ງແມ, ພະຍາມານ
ຈວນຈະຮັບພວກເຈົ້າບາງຄົນຖິ້ມໃສ່ຄຸກເພື່ອທົດລອງໃຈພວກເຈົ້າ ແລະພວກເຈົ້າຈະໄດ້ຮັບ
ຄວາມທຸກຍາກລຳບາກໃນລະຫວ່າງສິບວັນ ແຕ່ເຈົ້າຈົ່ງມີໃຈສັດຊື່ສຸດຈະລິດຈົນເຖິງວັນຕາຍ
ແລ້ວເຮົາຈະເອົາພວງມາໄລແຫ່ງຊີວິດໃຫ້ແກ່ເຈົ້າ. [11]ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານ
ຊົງກ່າວແກ່ຄຣິສຕະຈັກທັງຫລາຍ ຜູ້ທີ່ໄຊຊະນະຈະບໍ່ຖືກອັນຕະລາຍຈາກຄວາມຕາຍຄັ້ງທີ
ສອງ'."

## ຂຽນໄປເຖິງຄຣິສຕະຈັກເມືອງເປຄາໂມ

[12]"ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກໃນເມືອງເປຄາໂມວ່າ, 'ພຣະອົງຜູ້ຊົງຖື
ພຣະແສງສອງຄົມນັ້ນ ຊົງກ່າວດັ່ງນີ້ວ່າ.
[13]"ເຮົາຮູ້ຈັກທີ່ຢູ່ຂອງເຈົ້າ ຮູ້ວ່າທີ່ນັ້ນເປັນບັນລັງຂອງຊາຕານ ເຈົ້າຍັງຍຶດຖືນາມຂອງເຮົາໄວ້
ໝັ້ນ ແລະບໍ່ໄດ້ປະຕິເສດຄວາມເຊື່ອໃນເຮົາ ແມ່ນວ່າໃນເວລາທີ່ອັນຕິປາຜູ້ເປັນພະຍານທີ່ສັດຊື່
ຂອງເຮົາ ໄດ້ຖືກຂ້າເສຍໃນຖ້າມກາງພວກເຈົ້າໃນບ່ອນທີ່ຊາຕານຢູ່ກໍຕາມ. [14]ແຕ່ເຮົາມີຂໍ້ທີ່ຈະ
ຕໍ່ວ່າເຈົ້າບາງຂໍ້ ທີ່ນັ້ນມີບາງຄົນໃນພວກເຈົ້າທີ່ຖືຕາມຄຳສອນຂອງບາລາອາມ ຜູ້ໄດ້ສອນໃຫ້
ກະສັດບາລາກກໍ່ເຫດຕໍ່ໜ້າພວກອິສຣາເອນ ເພື່ອໃຫ້ເຂົາຫລົງຜິດ ຄືໃຫ້ເຂົາກິນຂອງທີ່ໄດ້ບູ-
ຊາແກ່ພຣະທຽມແລ້ວ ແລະໃຫ້ເຂົາລ່ວງຜິດຊາຍຍິງ. [15]ຢ່າງດຽວກັນໃນພວກເຈົ້າມີບາງຄົນທີ່
ໄດ້ຖືຕາມຄຳສອນແຫ່ງພວກນີໂກລາຍເຕ. [16]ເຫດສັນນັ້ນຈົ່ງກັບໃຈເສຍໃໝ່ ຖ້າບໍ່ດັ່ງນັ້ນເຮົາ
ຈະຮີບມາຫາເຈົ້າ ແລະຈະສູ້ຮົບກັບເຂົາເຫລົ່ານັ້ນດ້ວຍດາບຈາກປາກຂອງເຮົາ. [17]ຜູ້ໃດມີຫູ ຈົ່ງ
ຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ ເຮົາຈະໃຫ້ມານາທີ່ເຊື່ອງໄວ້ແກ່
ຜູ້ທີ່ມີໄຊຊະນະ ແລະຈະໃຫ້ຫີນຂາວແກ່ຜູ້ນັ້ນ ໃນຫີນນັ້ນມີຊື່ໃໝ່ຈາລຶກໄວ້ ຊຶ່ງບໍ່ມີຜູ້ໃດຮູ້ນອກ-
ຈາກຜູ້ທີ່ຮັບເທົ່ານັ້ນ'."

## ຂຽນໄປເຖິງຄຣິສຕະຈັກທີ່ເມືອງທົວເຕຣາ

[18]"ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງທົວເຕຣາວ່າ 'ພຣະບຸດຂອງ

ພຣະເຈົ້າ ຜູ້ຊຶ່ງມີພຣະເນດເໝືອນດັ່ງແປວໄຟ ແລະມີພຣະບາດເໝືອນດັ່ງທອງເຫລືອງກ້ຽງ ຊຶ່ງ
ກ່າວດັ່ງນີ້ວ່າ.

19"ເຮົາຮູ້ຈັກການກະທຳຂອງເຈົ້າ ຮູ້ຄວາມຮັກ, ຄວາມເຊື່ອ, ການປະຕິບັດ, ແລະຄວາມ-
ພຽນອົດທົນຂອງເຈົ້າ ຮູ້ວ່າການເບື້ອງປາຍຂອງເຈົ້າມີຫລາຍກວ່າເບື້ອງຕົ້ນ. 20ແຕ່ເຮົາມີຂໍ້ທີ່ຈະ
ຕໍ່ວ່າເຈົ້າ ຄືເຈົ້າຍອມທົນຟັງຜູ້ຍິງຊື່ເຢເຊເບນ ທີ່ອ້າງຕົວເປັນຜູ້ປະກາດພຣະທຳ ຍິງນັ້ນສອນ
ແລະລໍ້ລວງພວກຂ້ອຍໃຊ້ຂອງເຮົາໃຫ້ລ່ວງຜິດຊາຍຍິງ ແລະໃຫ້ກິນຂອງທີ່ບູຊາແກ່ພຣະທຽມ
ແລ້ວ. 21ເຮົາໄດ້ໃຫ້ຍິງນັ້ນມີໂອກາດທີ່ຈະກັບໃຈໃໝ່ ແຕ່ນາງບໍ່ຢາກກັບໃຈຈາກການຜິດຊາຍ
ຍິງຂອງຕົນ. 22ດັ່ງນີ້ເຮົາຈະຖິ້ມຍິງນັ້ນໄວ້ເທິງບ່ອນນອນ ແລະຄົນທັງຫລາຍທີ່ລ່ວງຜິດຊາຍກັບ
ຍິງນັ້ນ ເຮົາຈະຖິ້ມໄວ້ໃນຄວາມທຸກລຳບາກອັນໜັກ ເວັ້ນໄວ້ແຕ່ຄົນເຫລົ່ານັ້ນຈະກັບໃຈເສຍໃໝ່
ຈາກບັນດາການກະທຳຂອງຍິງນັ້ນ. 23ຝ່າຍລູກຂອງຍິງນັ້ນ ເຮົາຈະປະຫານເຂົາໃຫ້ຕາຍເສຍ
ແລະຄຣິສຕະຈັກທັງປວງຈະໄດ້ຮູ້ວ່າເຮົານີ້ເປັນຜູ້ຊັນນະສູດເບິ່ງຈິດໃຈ ເຮົາຈະໄດ້ຮາງວັນແກ່
ເຈົ້າທັງຫລາຍທຸກຄົນຕາມການກະທຳຂອງຕົນ. 24ແຕ່ພວກເຈົ້າທີ່ຍັງເຫລືອຢູ່ທີ່ເມືອງທົວເຕຣາ
ຄືຜູ້ທີ່ບໍ່ໄດ້ຖືຄຳສອນນີ້ ແລະບໍ່ຮູ້ຈັກສິ່ງທີ່ເຂົາເອີ້ນວ່າຄວາມເລິກລັບຂອງຊາຕານນັ້ນ ເຮົາຂໍ
ບອກວ່າ ເຮົາບໍ່ເອົາພາລະອື່ນໃດວາງໃສ່ພວກເຈົ້າ.

25ແຕ່ສິ່ງທີ່ເຈົ້າທັງຫລາຍມີຢູ່ແລ້ວນັ້ນ ຈົ່ງຍຶດຖືໄວ້ໃຫ້ໝັ້ນຈົນກວ່າເຮົາຈະມາ. 26ຜູ້ທີ່ມີໄຊ-
ຊະນະແລະຖືຮັກສາກິດຈະການຂອງເຮົາໄວ້ຈົນເຖິງທີ່ສຸດ ເຮົາຈະໃຫ້ຜູ້ນັ້ນມີອຳນາດປົກຄອງ
ບັນດາປະຊາຊາດ. 27ແລະຜູ້ນັ້ນຈະບັງຄັບບັນຊາເຂົາດ້ວຍຄ້ອນເຫລັກ ເໝືອນດັ່ງຊ່າງໝໍ້ທຳ-
ລາຍໝໍ້ ດິນໃຫ້ແຕກມຸ່ນເສຍ ຕາມທີ່ເຮົານີ້ໄດ້ຮັບອຳນາດຈາກພຣະບິດາຂອງເຮົາເໝືອນກັນ.
28ແລະເຮົາຈະປະທານດາວເພັກໃຫ້ແກ່ຜູ້ນັ້ນ. 29ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງ
ກ່າວແກ່ຄຣິສຕະຈັກທັງຫລາຍ'."

# ບົດທີ 3

## ຂຽນໄປເຖິງຄຣິສຕະຈັກເມືອງຊາເດ

1"ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງຊາເດວ່າ 'ພຣະອົງຜູ້ຊົງມີພຣະ-
ວິນຍານທັງເຈັດຂອງພຣະເຈົ້າ ແລະຊົງມີດາວທັງເຈັດດວງນັ້ນ ຊົງກ່າວດັ່ງນີ້ວ່າ, "ເຮົາຮູ້ຈັກ
ການກະທຳຂອງເຈົ້າ ເຈົ້າຜູ້ຊື່ວ່າມີຊີວິດຢູ່ ແຕ່ວ່າເຈົ້າຕາຍເສຍແລ້ວ.

2ເຈົ້າຈົ່ງຕື່ນຂຶ້ນແລະເຊີດຊູສ່ວນທີ່ເຫລືອ ຊຶ່ງຈວນຈະຕາຍແລ້ວນັ້ນໃຫ້ແຂງແຮງຂຶ້ນເພາະວ່າ
ເຮົາບໍ່ພົບການກະທຳຂອງເຈົ້າສຳເລັດດີ ຕໍ່ພຣະພັກພຣະເຈົ້າຂອງເຮົາ. 3ເຫດສັນນັ້ນເຈົ້າຈົ່ງຈຳ
ໄວ້ວ່າເຈົ້າໄດ້ຮັບແລະໄດ້ຍິນຢ່າງໃດ ຈົ່ງຖືຮັກສາແລະກັບໃຈເສຍໃໝ່ ຖ້າເຈົ້າບໍ່ຕື່ນຂຶ້ນ ເຮົາຈະ
ມາຫາເຈົ້າເໝືອນດັ່ງຂະໂມຍ ແລະເຈົ້າຈະບໍ່ຮູ້ວ່າຍາມໃດເຮົາຈະມາຫາເຈົ້າ. 4ແຕ່ວ່າໃນເມືອງ
ຊາເດເຈົ້າກໍຍັງມີຄົນຈຳນວນໜ້ອຍ ທີ່ບໍ່ໄດ້ເຮັດເສື້ອຜ້າຂອງຕົນເປື້ອນເປິ ຄົນເຫລົ່ານັ້ນຈະນຸ່ງ
ເຄື່ອງຂາວຍ່າງໄປກັບເຮົາ ເພາະເຂົາເປັນຄົນສົມຄວນຢູ່ແລ້ວ. 5ຜູ້ທີ່ໄຊຊະນະ ຜູ້ນັ້ນຈະຫົ່ມ
ເຄື່ອງຂາວແລະເຮົາຈະບໍ່ລຶບຊື່ຂອງຜູ້ນັ້ນອອກເສຍຈາກທະບຽນແຫ່ງຊີວິດຈັກເທື່ອ ແຕ່ເຮົາຈະ

ຮັບຮອງຊື່ຂອງຜູ້ນັ້ນຕໍ່ພຣະພັກ ພຣະບິດາ ຂອງ ເຮົາ ແລະຕໍ່ໜ້າຝູງ ເທວະດາຂອງພຣະອົງ. [6]ຜູ້
ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ ພຣະວິນຍານ ຊົງກ່າວ ແກ່ຄຣິສຕະຈັກທັງຫລາຍ’.”

## ຂຽນໄປເຖິງຄຣິສຕະຈັກທີ່ເມືອງຟີລາເດັນເຟຍ

[7]“ຈົ່ງຂຽນໄປຍັງທູດຂອງ ພຣະເຈົ້າ ທີ່ເມືອງ ຟີລາເດັນເຟຍ ວ່າ, ‘ພຣະອົງຜູ້ບໍລິສຸດ, ຜູ້ສັດຈິງ,
ຜູ້ຖືຂໍກະແຈຂອງ ດາວິດ, ຜູ້ຊົງໄຂແລ້ວຈະບໍ່ມີຜູ້ໃດອັດ, ຜູ້ຊົງອັດແລ້ວຈະບໍ່ມີຜູ້ໃດໄຂ, ຊົງກ່າວ
ດັ່ງນີ້ວ່າ.

[8]“ເຮົາຮູ້ຈັກການກະທຳຂອງເຈົ້າ ເບິ່ງແມ, ເຮົາໄດ້ໃຫ້ມີປະຕູໄຂຢູ່ຕໍ່ໜ້າເຈົ້າ ຊຶ່ງບໍ່ມີຜູ້ໃດອັດ
ໄດ້ ເຮົາຮູ້ວ່າເຈົ້າມີກຳລັງພຽງເລັກນ້ອຍ ແຕ່ກໍຍັງໄດ້ຖືຮັກສາຄຳສອນຂອງເຮົາແລະບໍ່ໄດ້ປະຕິ-
ເສດນາມຂອງເຮົາ. [9]ເບິ່ງແມ, ເຮົາຈະໃຫ້ພັກພວກຂອງຊາຕານ ທີ່ຕົວະວ່າເຂົາເອງເປັນຊາດຢິວ
ແຕ່ບໍ່ໄດ້ເປັນນັ້ນ ມາຂາບລົງ ແທບຕີນຂອງເຈົ້າ ແລະຈະໃຫ້ເຂົາຮູ້ວ່າຝ່າຍ ເຮົາໄດ້ຮັກ ເຈົ້າ.
[10]ເພາະວ່າເຈົ້າໄດ້ຖືຮັກສາຕາມຄຳສອນຂອງ ເຮົາຊຶ່ງ ໃຫ້ມີຄວາມພຽນອົດທົນ ຝ່າຍ ເຮົາຈະປ້ອງ
ກັນ ເຈົ້າ ເໝືອນກັນ ໃຫ້ພົ້ນ ຈາກການ ທົດລອງທີ່ຈວນ ຈະ ມີມາທົ່ວ ໂລກ ເພື່ອຈະລອງ ໃຈຄົນທັງ
ປວງທີ່ຢູ່ເໜືອໜ້າແຜ່ນດິນ. [11]ເຮົາຈະມາໃນໄວໆ ນີ້ ຈົ່ງຍຶດໝັ້ນຢູ່ໃນສິ່ງທີ່ເຈົ້າມີນັ້ນ ເພື່ອບໍ່ໃຫ້
ຜູ້ໃດຍາດຊີງ ເອົາພວງມາໄລຂອງ ເຈົ້າໄປໄດ້. [12]ຜູ້ທີ່ມີໄຊຊະນະ ເຮົາຈະ ໃຫ້ຜູ້ນັ້ນ ເປັນ ເສົາໃນ
ພຣະວິຫານ ພຣະເຈົ້າ ຂອງ ເຮົາ ແລະຜູ້ນັ້ນຈະບໍ່ອອກໄປນອກພຣະວິຫານຈັກເທື່ອ ເຮົາຈະຈາ-
ລຶກພຣະນາມແຫ່ງ ພຣະເຈົ້າ ຂອງ ເຮົາ ໃສ່ຕົວຜູ້ນັ້ນ ກັບທັງຊື່ມະຫານະຄອນ ແຫ່ງ ພຣະເຈົ້າ ຂອງ
ເຮົາ ຄືກຸງ ເຢຣູຊາເລັມ ໃໝ່ ຊຶ່ງລົງມາ ແຕ່ສະຫວັນຈາກ ພຣະເຈົ້າ ຂອງ ເຮົາ ແລະ ເຮົາຈະຈາລຶກ
ນາມໃໝ່ຂອງ ເຮົາ ໃສ່ຜູ້ນັ້ນ ເໝືອນກັນ. [13]ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ ພຣະວິນຍານ ຊົງກ່າວ ແກ່
ຄຣິສຕະຈັກທັງຫລາຍ’.”

## ຂຽນໄປເຖິງຄຣິສຕະຈັກທີ່ເມືອງລາວດີເກອາ

[14]“ຈົ່ງຂຽນໄປຍັງທູດຂອງ ພຣະເຈົ້າ ໃນຄຣິສຕະຈັກທີ່ ເມືອງ ລາວດີເກອາ ວ່າ, ‘ພຣະອົງຜູ້ຊົງ
ເປັນອາແມນນັ້ນ, ຊົງເປັນພະຍານທີ່ສັດຊື່ແລະທ່ຽງທຳ, ຊົງເປັນປະຖົມເຫດ ແຫ່ງສິ່ງສາລະພັດ
ຊຶ່ງ ພຣະເຈົ້າ ໄດ້ຊົງສ້າງ ໄດ້ຊົງກ່າວດັ່ງນີ້ວ່າ.

[15]“ເຮົາຮູ້ຈັກການກະທຳຂອງເຈົ້າ ເຈົ້າບໍ່ເຢັນບໍ່ຮ້ອນ ເຮົາຢາກໃຫ້ເຈົ້າເຢັນຫລືຮ້ອນ. [16]ເພາະ
ເຈົ້າພຽງແຕ່ອຸ່ນໆ ບໍ່ເຢັນບໍ່ຮ້ອນ ດັ່ງນັ້ນເຮົາຈະຄາຍເຈົ້າອອກຈາກປາກຂອງເຮົາ. [17]ເພາະເຈົ້າ
ເວົ້າວ່າ, “ຂ້ອຍຮັ່ງມີແລ້ວ, ໄດ້ຊັບສິ່ງຂອງທະວີຂຶ້ນ ຂ້ອຍບໍ່ຕ້ອງການສິ່ງໃດ” ເຈົ້າບໍ່ຮູ້ວ່າເຈົ້າ
ເປັນຄົນທຸກໄຮ້ເຂັນໃຈ, ເປັນຄົນໜ້າສົງສານ, ເປັນຄົນຂັດສົນ, ເປັນຄົນຕາບອດແລະເປືອຍ
ກາຍຢູ່. [18]ເຫດນັ້ນເຮົາເຕືອນສະຕິເຈົ້າໃຫ້ຊື້ຄຳທີ່ຫລອມໃຫ້ບໍລິສຸດແລ້ວຈາກເຮົາ ເພື່ອເຈົ້າຈະ
ໄດ້ເປັນຄົນຮັ່ງມີ ແລະໃຫ້ເຈົ້າຊື້ເສື້ອຂາວນຸ່ງຫົ່ມຕົວ ເພື່ອປົກບັງຄວາມລະອາຍຂອງການເປືອຍ
ກາຍຂອງເຈົ້າບໍ່ໃຫ້ປະກົດ ແລະຊື້ຢາໃສ່ຕາຂອງເຈົ້າເພື່ອເຈົ້າຈະໄດ້ເຫັນຮຸ່ງ. [19]ຝ່າຍເຮົາ, ເຮົາ
ຮັກຜູ້ໃດເຮົາກໍຕິຕຽນຂ້ຽນສອນຜູ້ນັ້ນ ເຫດສັນນັ້ນ ຈົ່ງມີໃຈຮ້ອນຮົນແລະຕັ້ງໃຈເສຍໃໝ່. [20]ເບິ່ງ
ແມ, ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາແລະໄຂປະຕູ ເຮົາຈະເຂົ້າໄປຫາຜູ້ນັ້ນ
ເຮົາຈະຮັບປະທານອາຫານຮ່ວມກັບຜູ້ນັ້ນ ແລະຜູ້ນັ້ນຈະຮັບປະທານອາຫານຮ່ວມກັບເຮົາ. [21]ຜູ້

ທີ່ໄຊຊະນະເຮົາຈະໃຫ້ຜູ້ນັ້ນນັ່ງກັບເຮົາເທິງບັນລັງຂອງເຮົາ ເໝືອນກັບທີ່ເຮົາມີໄຊຊະນະແລ້ວ
ແລະໄດ້ນັ່ງກັບພຣະບິດາຂອງເຮົາເທິງລາຊະບັນລັງຂອງພຣະອົງ. 22ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມ
ທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫລາຍ’.”

# ບົດທີ 4

## ການນະມັດສະການໃນສະຫວັນ

1ພາຍຫລັງເຫດການທັງຫລາຍນີ້ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້, ມີປະຕູໄຂຢູ່ໃນສະຫວັນ
ແລະພຣະສຸລະສຽງທຳອິດທີ່ຂ້າພະເຈົ້າໄດ້ຍິນ ຊົງກ່າວກັບຂ້າພະເຈົ້າເໝືອນດັ່ງສຽງແກວ່າ,
“ຈົ່ງລຸກຂຶ້ນມາທີ່ນີ້ ແລະເຮົາຈະສະແດງໃຫ້ເຈົ້າເຫັນເຫດການທີ່ຕ້ອງເກີດຂຶ້ນໃນພາຍໜ້າ.” 2ໃນ
ທັນໃດນັ້ນຂ້າພະເຈົ້າໄດ້ປະກອບໄປດ້ວຍພຣະວິນຍານ ແລະເບິ່ງແມ, ມີລາຊະບັນລັງຕັ້ງຢູ່ໃນ
ສະຫວັນ, ມີທ່ານອົງໜຶ່ງປະທັບຢູ່ເທິງບັນລັງນັ້ນ. 3ທ່ານຜູ້ປະທັບເທິງລາຊະບັນລັງນັ້ນມີລັກສະ-
ນະເໝືອນແກ້ວມະນີໂຊດແລະແກ້ວພິລາ ມີຮຸ້ງກິນນ້ຳລ້ອມຮອບລາຊະບັນລັງນັ້ນຄ້າຍຄື ແສງ
ແກ້ວມໍລະກົດ. 4ລ້ອມຮອບລາຊະບັນລັງນັ້ນມີບັນລັງອີກຊາວສີ່ອັນ ແລະມີຜູ້ອາວຸໂສຊາວສີ່ທ່ານ
ນັ່ງເທິງບັນລັງເຫລົ່ານັ້ນ ທຸກທ່ານນຸ່ງເຄື່ອງຂາວແລະມີພວງມາໄລຄຳສວມຫົວ. 5ມີຟ້າແມບຟ້າ-
ຮ້ອງແລະສຽງຕ່າງໆ ດັງອອກມາຈາກລາຊະບັນລັງນັ້ນ ແລະມີໂຄມໄຟເຈັດໜ່ວຍໄຕ້ໄວ້ຕໍ່ໜ້າ
ລາຊະບັນລັງນັ້ນ ໂຄມໄຟເຫລົ່ານັ້ນຄືວິນຍານທັງເຈັດຂອງພຣະເຈົ້າ. 6ຢູ່ຕໍ່ໜ້າລາຊະບັນລັງ
ເປັນເໝືອນທະເລແກ້ວມະນີ

ຢູ່ອ້ອມຮອບລາຊະບັນລັງທຸກດ້ານມີສັດໂລກສີ່ຕົວ ຊຶ່ງມີຕາເຕັມທັງຂ້າງໜ້າແລະຂ້າງຫລັງ.
7ສັດຕົວທີ່ໜຶ່ງເໝືອນສິງ, ຕົວທີ່ສອງເໝືອນງົວນ້ອຍ, ຕົວທີ່ສາມມີໜ້າເໝືອນມະນຸດ, ແລະຕົວ
ທີ່ສີ່ເໝືອນນົກອິນທີກຳລັງບິນ. 8ສັດທັງສີ່ຕົວ ທຸກໂຕມີປີກຫົກປີກ ແລະມີຕາເຕັມຂ້າງນອກ
ແລະຂ້າງໃນ ສັດເຫລົ່ານັ້ນຮ້ອງຕະຫລອດເວັນຕະຫລອດຄືນ ບໍ່ຢຸດບໍ່ເຊົາວ່າ, “ບໍລິສຸດ, ບໍລິ-
ສຸດ, ບໍລິສຸດ ອົງພຣະຜູ້ເປັນຜູ້ຊົງລິດທານຸພາບສູງສຸດ, ຜູ້ຊົງດຳລົງຢູ່ໃນອາດີດ, ຜູ້ຊົງດຳລົງຢູ່
ໃນປັດຈຸບັນ, ແລະຜູ້ຈະສະເດັດມາ.” 9ຄັນສັດເຫລົ່ານັ້ນຖວາຍຄຳສັນລະເສີນ, ຖວາຍພຣະ-
ກຽດ, ແລະໂມທະນາພຣະຄຸນແດ່ພຣະອົງ, ຜູ້ປະທັບເທິງລາຊະບັນລັງ, ຜູ້ຊົງມີພຣະຊົນດຳລົງຢູ່
ຕະຫລອດໄປເປັນນິດເມື່ອໃດ. 10ເມື່ອນັ້ນບັນດາຜູ້ອາວຸໂສຊາວສີ່ທ່ານ ກໍຂາບລົງຖວາຍບັງຄົມ
ພຣະອົງຜູ້ປະທັບເທິງລາຊະບັນລັງນັ້ນ ນະມັດສະການພຣະອົງຜູ້ຊົງພຣະຊົນຢູ່ຕະຫລອດໄປ
ເປັນນິດ ແລ້ວຖອດພວງມາໄລອອກວາງລົງຕໍ່ໜ້າລາຊະບັນລັງຮ້ອງວ່າ,

11 “ຂ້າແດ່ອົງພຣະຜູ້ເປັນເຈົ້າ,
ພຣະຜູ້ເປັນພຣະເຈົ້າຂອງຂ້າພະອົງທັງຫລາຍ
ພຣະອົງຊົງສົມຄວນທີ່ຈະໄດ້ຮັບຄຳສັນລະເສີນ, ພຣະກຽດ, ແລະລິດເດດ
ເພາະວ່າພຣະອົງໄດ້ຊົງສ້າງສັບພະສິ່ງທັງປວງ
ແລະສັບພະສິ່ງທັງປວງກໍຊົງສ້າງຂຶ້ນແລ້ວ
ແລະດຳລົງຢູ່ຕາມຊອບພຣະໄທພຣະອົງ.”

# ບົດທີ 5

## ໜັງສືມ້ວນແລະພຣະເມສານ້ອຍ

[1]ໃນພຣະຫັດເບື້ອງຂວາຂອງພຣະອົງ, ຜູ້ຊົງປະທັບເທິງພຣະລາຊະບັນລັງນັ້ນ ຂ້າພະເຈົ້າໄດ້
ເຫັນໜັງສືມ້ວນໜຶ່ງຂຽນໄວ້ທັງຂ້າງໃນແລະຂ້າງນອກ ຕິຕາປະທັບໄວ້ເຈັດດວງ. [2]ແລະຂ້າພະ-
ເຈົ້າໄດ້ເຫັນເທວະດາຜູ້ມີລິດຕົນໜຶ່ງປະກາດໂດຍສຽງອັນດັງວ່າ, "ຜູ້ໃດໜໍເປັນຜູ້ສົມຄວນຈະ
ແກະຕາປະທັບແລະມາຍມ້ວນໜັງສືມ້ວນນີ້ອອກ." [3]ບໍ່ມີຜູ້ໃດໃນສະຫວັນ, ເທິງແຜ່ນດິນໂລກ,
ຫລືໃຕ້ແຜ່ນດິນກໍດີ ທີ່ສາມາດມາຍໜັງສືມ້ວນນັ້ນອອກຫລືເບິ່ງໜັງສືນັ້ນໄດ້. [4]ຂ້າພະເຈົ້າໄດ້
ຮ້ອງໄຫ້ຮ່ຳໄຮຫລາຍເພາະບໍ່ມີຜູ້ໃດສົມຄວນຈະມາຍໜັງສືນັ້ນອອກຫລືເບິ່ງໄດ້. [5]ແລ້ວມີຜູ້ໜຶ່ງ
ໃນພວກອາວຸໂສນັ້ນບອກຂ້າພະເຈົ້າວ່າ, "ຢ່າຮ້ອງໄຫ້ ເບິ່ງແມ, ສິງແຫ່ງກະກຸນຢູດາ, ໜໍ່ເຊື້ອ
ຂອງດາວິດ ໄດ້ໄຊຊະນະແລ້ວ ຈຶ່ງສາມາດແກະຕາທັງເຈັດແລະມາຍໜັງສືມ້ວນນັ້ນໄດ້.

[6]ໃນລະຫວ່າງລາຊະບັນລັງກັບສັດທັງສີ່ ແລະໃນຖ້າມກາງພວກອາວຸໂສເຫລົ່ານັ້ນ ຂ້າພະ-
ເຈົ້າໄດ້ເຫັນພຣະເມສານ້ອຍປະທັບຢືນຢູ່ ເໝືອນຖືກຂ້າແລ້ວ[ກ] ພຣະເມສານ້ອຍນັ້ນມີເຂົາເຈັດ
ອັນ, ມີຕາເຈັດໜ່ວຍຊຶ່ງເປັນວິນຍານທັງເຈັດຂອງພຣະເຈົ້າ ທີ່ຊົງໃຊ້ອອກໄປທົ່ວແຜ່ນດິນໂລກ.
[7]ແລະພຣະເມສານ້ອຍນັ້ນໄດ້ເຂົ້າມາຮັບໜັງສືມ້ວນນັ້ນຈາກພຣະຫັດເບື້ອງຂວາຂອງພຣະອົງ ຜູ້
ຊົງປະທັບເທິງລາຊະບັນລັງນັ້ນ. [8]ເມື່ອພຣະອົງຊົງຮັບໜັງສືມ້ວນນັ້ນແລ້ວ ສັດທັງສີ່ກັບພວກ
ອາວຸໂສຊາວສີ່ທ່ານນັ້ນ ກໍຂາບລົງຖວາຍບັງຄົມພຣະເມສານ້ອຍ ທຸກທ່ານຖືພິນແລະຂັນຄຳເຕັມ
ດ້ວຍເຄື່ອງຫອມຊຶ່ງເປັນຄຳໄຫວ້ວອນຂອງໄພ່ພົນທັງປວງຂອງພຣະເຈົ້າ. [9]ເຂົາໄດ້ຮ້ອງເພງໃໝ່
ວ່າ,

"ພຣະອົງຊົງເປັນຜູ້ສົມຄວນຈະຊົງຮັບມ້ວນໜັງສື
ແລະແກະຕາມ້ວນໜັງສືອອກ
ເພາະວ່າພຣະອົງຊົງຖືກຂ້າແລ້ວ
ແລະດ້ວຍພຣະໂລຫິດຂອງພຣະອົງນັ້ນ
ພຣະອົງໄດ້ຊົງໄຖ່ມະນຸດທຸກເຜົ່າທຸກພາສາ
ທຸກຊາດແລະທຸກປະເທດສຳລັບພຣະເຈົ້າ.
[10] ພຣະອົງໄດ້ຊົງບັນດານໃຫ້ເຂົາເປັນລາຊະອານາຈັກ
ແລະເປັນປະໂລຫິດທີ່ປະຕິບັດພຣະເຈົ້າຂອງພວກເຮົາ
ແລະເຂົາເຫລົ່ານັ້ນຈະໄດ້ປົກຄອງແຜ່ນດິນໂລກ."

[11]ແລ້ວຂ້າພະເຈົ້າໄດ້ຫລຽວເບິ່ງ ແລະໄດ້ຍິນສຽງເທວະດາ ເປັນຈຳນວນຫລວງຫລາຍນັບ
ເປັນໂກດໆ ແສນໆ ຊຶ່ງຢູ່ອ້ອມຮອບພຣະລາຊະບັນລັງ, ຮອບສັດ, ແລະຮອບຜູ້ອາວຸໂສທັງ-
ຫລາຍນັ້ນ. [12]ຮ້ອງສຽງດັງວ່າ,

"ພຣະເມສານ້ອຍຜູ້ຖືກຂ້າແລ້ວນັ້ນ[ຂ]
ເປັນຜູ້ສົມຄວນໄດ້ຮັບລິດເດດ, ຊັບສົມບັດ,

---

[ກ]ໝາຍຄວາມວ່າ "ຖືກຂ້າເພື່ອບູຊາ." [ຂ]ເຊີນເບິ່ງ ພນມ 5:6.

ສະຕິປັນຍາ, ອານຸພາບ, ກຽດຕິຍົດ,
ສະຫງ່າລາສີແລະຄຳສັນລະເສີນ.”
[13]ແລະຂ້າພະເຈົ້າໄດ້ຍິນສຽງສິ່ງທີ່ມີຊີວິດທັງໝົດ ທັງໃນສະຫວັນ, ເທິງແຜ່ນດິນໂລກ, ໃຕ້
ແຜ່ນດິນ, ແລະໃນມະຫາສະໝຸດ ຄືສິ່ງທັງປວງຊຶ່ງຢູ່ໃນທີ່ນັ້ນຮ້ອງວ່າ,
“ຂໍໃຫ້ຄຳສັນລະເສີນ, ກຽດຕິຍົດ, ສະຫງ່າລາສີ, ແລະລິດທານຸພາບ
ຈົ່ງມີແດ່ພຣະອົງ ຜູ້ຊົງປະທັບເທິງພຣະລາຊະບັນລັງ
ແລະແດ່ພຣະເມສານ້ອຍ ຕະຫລອດໄປເປັນນິດ.”
[14]ສັດທັງສີ່ນັ້ນກໍຮ້ອງວ່າ, “ອາແມນ” ແລະຜູ້ອາວຸໂສເຫລົ່ານັ້ນກໍຂາບລົງນະມັດສະການ.

# ບົດທີ 6

## ຕາປະທັບທັງເຈັດ

[1]ເມື່ອພຣະເມສານ້ອຍຊົງແກະຕາດວງໜຶ່ງໃນເຈັດດວງນັ້ນອອກແລ້ວ ຂ້າພະເຈົ້າໄດ້ເບິ່ງ
ແລະໄດ້ຍິນສັດຕົວໜຶ່ງໃນສີ່ຕົວນັ້ນຮ້ອງສຽງດັງເໝືອນສຽງຟ້າຮ້ອງວ່າ, “ມາເທາະ.” [2]ຂ້າພະ-
ເຈົ້າໄດ້ເບິ່ງ ແລະດັ່ງນີ້, ມີມ້າສີຂາວຕົວໜຶ່ງອອກມາ ຜູ້ທີ່ຂີ່ມ້ານັ້ນຖືທະນູ ແລະໄດ້ຮັບພຣະລາ-
ຊະທານພວງມາໄລ ແລ້ວກໍຂີ່ມ້າອອກໄປຢ່າງມີໄຊເພື່ອຈະໄຊຊະນະ.
[3]ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີສອງນັ້ນແລ້ວ ຂ້າພະເຈົ້າໄດ້ຍິນສຽງສັດຕົວທີ
ສອງຮ້ອງວ່າ, “ມາເທາະ.” [4]ແລະມີມ້າສີແດງເຂັ້ມຕົວໜຶ່ງອອກມາອີກ ຜູ້ທີ່ຂີ່ມ້າຕົວນີ້ໄດ້ຮັບພະ-
ລາຊະອານຸຍາດໃຫ້ນຳສັນຕິສຸກໄປຈາກໂລກ ເພື່ອໃຫ້ຄົນທັງປວງຮົບຮາຂ້າຟັນກັນ ແລະທັງໄດ້
ພຣະລາຊະທານດາບໃຫຍ່ດວງໜຶ່ງໃຫ້ແກ່ຜູ້ນັ້ນ.
[5]ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີ່ສາມນັ້ນແລ້ວ ຂ້າພະເຈົ້າໄດ້ຍິນສຽງສັດຕົວທີ
ສາມຮ້ອງວ່າ, “ມາເທາະ” ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້, ມີມ້າສີດຳຕົວໜຶ່ງອອກມາ ຜູ້ທີ່ຂີ່ມ້າ
ນັ້ນຖືຄັນຊັ່ງ. [6]ຂ້າພະເຈົ້າໄດ້ຍິນເໝືອນກັບສຽງທີ່ດັງ ອອກມາຈາກຖ້າມກາງສັດທັງສີ່ນັ້ນວ່າ,
“ເຂົ້າບະເລລາຄາລິດໜຶ່ງຕໍ່ໜຶ່ງເດນາຣິອົນ ເຂົ້າຝ້າງສາມລິດຕໍ່ໜຶ່ງເດນາຣິອົນ ແຕ່ຢ່າເຮັດອັນ-
ຕະລາຍຕໍ່ນ້ຳມັນແລະເຫລົ້າແວງ.”
[7]ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີສີ່ນັ້ນແລ້ວ ຂ້າພະເຈົ້າໄດ້ຍິນສຽງສັດຕົວທີສີ່
ຮ້ອງວ່າ, “ມາເທາະ.” [8]ຂ້າພະເຈົ້າໄດ້ເບິ່ງ, ແລະດັ່ງນີ້, ມີມ້າສີຂຽວອ່ອນໂຕໜຶ່ງອອກມາ ຜູ້ທີ່ຂີ່
ມ້ານັ້ນມີຊື່ວ່າ ມັດຈຸລາດ ແລະແດນມໍລະນາກໍຕິດຕາມມານຳ ເຂົາທັງສອງໄດ້ຮັບພຣະລາຊະ-
ທານອຳນາດລ້າງຜານແຜ່ນດິນໂລກໄດ້ໜຶ່ງສ່ວນສີ່ດ້ວຍຄົມດາບ, ດ້ວຍຄວາມອຶດຢາກ, ດ້ວຍ
ຄວາມຕາຍ, ແລະດ້ວຍສັດຮ້າຍຕ່າງໆ ໃນແຜ່ນດິນໂລກ.
[9]ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີ່ຫ້ານັ້ນແລ້ວ ຂ້າພະເຈົ້າໄດ້ເຫັນດວງວິນຍານ
ຢູ່ໃຕ້ແທ່ນບູຊາ ເປັນວິນຍານຂອງຄົນທັງຫລາຍທີ່ຖືກຂ້າເພາະພຣະທຳຂອງພຣະເຈົ້າ ແລະຄຳ
ພະຍານທີ່ເຂົາຍຶດຖືນັ້ນ. [10]ເຂົາເຫລົ່ານັ້ນໄດ້ຮ້ອງທູນຂຶ້ນວ່າ, “ຂ້າແດ່ອົງພຣະຜູ້ເປັນເຈົ້າ ຜູ້ບໍ-
ລິສຸດແລະທ່ຽງແທ້ ຍັງດົນປານໃດໜໍ ພຣະອົງຈຶ່ງຊົງພິພາກສາ ຕອບສະໜອງຄົນທັງຫລາຍທີ່-

ຢູ່ເທິງແຜ່ນດິນໂລກທີ່ໄດ້ຂ້າພວກຂ້າພະອົງນັ້ນ.” [11]ແລ້ວເຂົາທຸກຄົນໄດ້ຮັບພຣະລາຊະທານ
ເສື້ອສີຂາວແລະຊົງສັ່ງໃຫ້ເຂົາລໍໄປຈັກໜ້ອຍ ຈົນກວ່າຈຳນວນເພື່ອນຂ້ອຍໃຊ້ແລະພີ່ນ້ອງຂອງ
ເຂົາຈະຄົບຖ້ວນແລ້ວ ຄືພວກທີ່ຈວນຈະຖືກຂ້າເໝືອນກັບເຂົານັ້ນ.

[12]ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີຫົກນັ້ນແລ້ວ ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້,
ເກີດແຜ່ນດິນຫວັ່ນໄຫວອັນໃຫຍ່, ດວງອາທິດກໍເກີດມືດດຳເໝືອນດັ່ງຜ້າຂົນສັດຫຍາບ, ດວງ
ຈັນວັນເພັງກໍເກີດເປັນສີເລືອດ. [13]ດວງດາວທັງຫລາຍໃນທ້ອງຟ້າກໍຕົກລົງເທິງແຜ່ນດິນ ເໝືອນ
ກັບຕົ້ນເດື່ອເທດທີ່ຖືກລົມກ້າພັດ ຈົນໝາກທີ່ຍັງບໍ່ທັນສຸກຫລົ່ນລົງໝົດ. [14]ທ້ອງຟ້າກໍຫົດເຂົ້າເສຍ
ເໝືອນດັ່ງໜັງສືທີ່ເຂົາມ້ວນ ພູທຸກໜ່ວຍແລະເກາະທຸກເກາະກໍເຄື່ອນໄປຈາກບ່ອນເດີມ. [15]ແລ້ວ
ກະສັດທັງຫລາຍໃນແຜ່ນດິນໂລກ, ພວກເຈົ້ານາຍ, ພວກນາຍພັນນາຍພົນ, ພວກເສດຖີ, ພວກ
ຜູ້ມີອຳນາດ, ແລະທຸກຄົນທັງທີ່ເປັນຂ້ອຍຂ້າແລະມີເສລີ ກໍພາກັນໄປລີ້ຊ້ອນຢູ່ໃນຖ້ຳແລະຫວ່າງ
ຫີນຕາມພູ. [16]ເຂົາຮ້ອງບອກພູແລະໂງ່ນຫີນວ່າ, “ຂໍໃຫ້ເນີ້ງມາບັງພວກເຮົາໄວ້ ໃຫ້ພົ້ນຈາກ
ພຣະພັກຂອງພຣະອົງ ຜູ້ຊົງປະທັບເທິງພຣະລາຊະບັນລັງ ແລະຈາກພຣະພິໂລດຂອງພຣະເມ-
ສານ້ອຍນັ້ນ. [17]ເພາະວ່າວັນສຳຄັນແຫ່ງພຣະພິໂລດຂອງພຣະອົງໄດ້ມາເຖິງແລ້ວ ແລະຜູ້ໃດໜໍ
ຈະອາດທົນຢູ່ໄດ້.”

# ບົດທີ 7

## ແສນສີ່ໝື່ນສີ່ພັນຄົນຮັບການປະທັບຕາ

[1]ຫລັງຈາກນັ້ນຂ້າພະເຈົ້າໄດ້ເຫັນເທວະດາສີ່ຕົນ ຢືນຢູ່ໃນທິດທັງສີ່ຂອງແຜ່ນດິນໂລກ ຫ້າມ
ລົມໃນແຜ່ນດິນທັງສີ່ທິດໄວ້ບໍ່ໃຫ້ພັດມາໃສ່ບົກ, ໃສ່ທະເລ, ຫລືຕົ້ນໄມ້ໃດໆ. [2]ແລ້ວຂ້າພະເຈົ້າ
ໄດ້ເຫັນເທວະດາອີກຕົນໜຶ່ງ ປະກົດຂຶ້ນມາຈາກທິດຕາເວັນອອກ ຖືຕາປະທັບຂອງພຣະເຈົ້າຜູ້
ຊົງພຣະຊົນຢູ່ ເທວະດາຕົນນັ້ນປະກາດສຽງດັ່ງແກ່ເທວະດາທັງສີ່ ຜູ້ຊຶ່ງໄດ້ຮັບພຣະລາຊະທານ
ອຳນາດໃຫ້ເຮັດອັນຕະລາຍແກ່ແຜ່ນດິນແລະທະເລນັ້ນ. [3]ວ່າ, “ຢ່າເຮັດອັນຕະລາຍແກ່ແຜ່ນ-
ດິນ, ແກ່ທະເລ, ຫລືຕົ້ນໄມ້ ຈົນກວ່າເຮົາຈະໄດ້ປະທັບຕາໄວ້ທີ່ໜ້າຜາກບັນດາຂ້ອຍຂ້າ ຂອງ
ພຣະເຈົ້າຂອງເຮົາເສຍກ່ອນ.” [4]ແລະຂ້າພະເຈົ້າໄດ້ຍິນຈຳນວນຂອງຜູ້ທີ່ໄດ້ຮັບປະທັບຕາແລ້ວ
ຄືຜູ້ທີ່ມາຈາກທຸກກະກຸນໃນພວກອິສຣາເອນ ມີແສນສີ່ໝື່ນສີ່ພັນຄົນ.

[5] ຈາກກະກຸນຢູດາ ມີໝື່ນສອງພັນຄົນ,
ຈາກກະກຸນຣູເບັນໝື່ນສອງພັນຄົນ,
ຈາກກະກຸນຄາດໝື່ນສອງພັນຄົນ.
[6] ຈາກກະກຸນອາເຊີ ໝື່ນສອງພັນຄົນ,
ຈາກກະກຸນນັບທາລີໝື່ນສອງພັນຄົນ,
ຈາກກະກຸນມານາເຊໝື່ນສອງພັນຄົນ.
[7] ຈາກກະກຸນຊີເມໂອນໝື່ນສອງພັນຄົນ,
ຈາກກະກຸນເລວີໝື່ນສອງພັນຄົນ,

ຈາກກະກຸນ ອິດຊາຄາ ໝື່ນສອງພັນຄົນ.
8 ຈາກກະກຸນ ເຊບູລູນ ໝື່ນສອງພັນຄົນ,
ຈາກກະກຸນ ໂຢເຊັບ ໝື່ນສອງພັນຄົນ,
ຈາກກະກຸນ ເບັນຢາມິນ ໝື່ນສອງພັນຄົນ.

## ມວນຊົນຈາກທຸກປະຊາຊາດ

9ຫລັງຈາກນັ້ນຂ້າພະເຈົ້າເບິ່ງ ແລະດັ່ງນີ້, ມີຝູງຄົນຫລວງຫລາຍເຫລືອຄັນນະນານັບ ມາ
ຈາກທຸກປະເທດ, ທຸກກະກຸນ, ທຸກຊາດ, ແລະທຸກພາສາ ຄົນເຫລົ່ານັ້ນນຸ່ງເຄື່ອງສີຂາວ, ຖື
ກ້ານຕານ, ຢືນຢູ່ຕໍ່ໜ້າພຣະລາຊະບັນລັງແລະຕໍ່ພຣະພັກພຣະເມສານ້ອຍນັ້ນ. 10ຮ້ອງສຽງດັງ
ວ່າ,

"ຄວາມລອດພົ້ນຂຶ້ນຢູ່ກັບ ພຣະເຈົ້າ ຂອງພວກເຮົາ
ຜູ້ຊົງປະທັບເທິງພຣະລາຊະບັນລັງ ແລະຂຶ້ນຢູ່ກັບພຣະເມສານ້ອຍ."

11ແລະເທວະດາທັງປວງທີ່ຢືນຢູ່ອ້ອມລາຊະບັນລັງ, ອ້ອມຜູ້ອາວຸໂສ, ແລະອ້ອມສັດທັງສີ່ນັ້ນ
ກົ້ມລົງຕໍ່ໜ້າພຣະລາຊະບັນລັງ ນະມັດສະການ ພຣະເຈົ້າ. 12ໂດຍກ່າວວ່າ,

"ອາແມນ, ຄວາມສັນລະເສີນ, ສະຫງ່າລາສີ, ສະຕິປັນຍາ,
ຄຳໂມທະນາ, ພຣະກຽດຕິຍົດ, ອຳນາດ, ແລະລິດເດດ,
ຈົ່ງມີແດ່ ພຣະເຈົ້າ ຂອງພວກຂ້າພະອົງຕະຫລອດໄປເປັນນິດ ອາແມນ."

13ແລ້ວຜູ້ໜຶ່ງໃນພວກອາວຸໂສນັ້ນຖາມຂ້າພະເຈົ້າວ່າ, "ຄົນທີ່ນຸ່ງເຄື່ອງສີຂາວເຫລົ່ານັ້ນແມ່ນ
ໃຜ ແລະມາແຕ່ໃສ?" 14ຂ້າພະເຈົ້າໄດ້ຕອບຜູ້ນັ້ນວ່າ, "ທ່ານເອີຍ, ທ່ານກໍຊາບຢູ່ແລ້ວ" ຜູ້ນັ້ນ
ຈຶ່ງບອກຂ້າພະເຈົ້າວ່າ, "ຄົນເຫລົ່ານີ້ແຫລະ, ທີ່ມາຈາກຄວາມທຸກຂະເວທະນາອັນໃຫຍ່ ເຂົາໄດ້
ຊຳລະ ລ້າງ ເສື້ອ ຜ້າ ຂອງ ເຂົາ ໃຫ້ ຂາວ ສະອາດ ດ້ວຍ ພຣະໂລຫິດ ຂອງ ພຣະເມສາ ນ້ອຍ ນັ້ນ.
15ເພາະເຫດນັ້ນເຂົາຈຶ່ງໄດ້ຢູ່ຕໍ່ໜ້າພຣະລາຊະບັນລັງຂອງ ພຣະເຈົ້າ ແລະປະຕິບັດພຣະອົງໃນ
ພຣະວິຫານຂອງພຣະອົງທັງກາງເວັນແລະກາງຄືນ ແລະພຣະອົງ ຜູ້ຊົງປະທັບເທິງພຣະລາຊະ-
ບັນລັງນັ້ນ ຈະຊົງສະຖິດຢູ່ນຳແລະປົກປ້ອງຄຸ້ມຄອງເຂົາ. 16ຕໍ່ໄປເຂົາຈະບໍ່ອຶດເຂົ້າຢາກນ້ຳອີກ
ຈັກເທື່ອ ແສງແດດແລະຄວາມຮ້ອນຢ່າງໜຶ່ງຢ່າງໃດຈະບໍ່ສ່ອງຖືກເຂົາ. 17ເພາະພຣະເມສາ
ນ້ອຍ ທີ່ປະທັບຢູ່ຖ້າມກາງພຣະລາຊະບັນລັງນັ້ນ ຈະຊົງເປັນຜູ້ດູແລເຂົາແລະຈະຊົງນຳເຂົາໄປ
ເຖິງນ້ຳພຸອັນປະກອບດ້ວຍຊີວິດ ແລະ ພຣະເຈົ້າ ຈະຊົງເຊັດນ້ຳຕາທຸກຢົດຈາກຕາຂອງເຂົາ.

# ບົດທີ 8

## ຕາປະທັບດວງທີເຈັດ

1ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີເຈັດ ຄວາມສະຫງັດງຽບກໍເກີດຂຶ້ນໃນສະ-
ຫວັນປະມານເຄິ່ງຊົ່ວໂມງ. 2ແລ້ວຂ້າພະເຈົ້າກໍເຫັນເທວະດາເຈັດຕົນທີ່ຢືນຢູ່ຕໍ່ພຣະພັກ ພຣະເຈົ້າ
ນັ້ນ ໄດ້ຮັບພຣະລາຊະທານແກເຈັດອັນ. 3ມີເທວະດາອີກຕົນໜຶ່ງຖືໝໍ້ຄຳໜ່ວຍໜຶ່ງອອກມາຢືນຢູ່
ຕໍ່ໜ້າແທ່ນ ໄດ້ຮັບພຣະລາຊະທານເຄື່ອງຫອມຈຳນວນຫລາຍ ເພື່ອຈະຖວາຍຮ່ວມກັບຄຳໄຫວ້

ວອນຂອງໄພ່ພົນທັງປວງຂອງ ພຣະເຈົ້າ ເທິງແທ່ນຄຳທີ່ຢູ່ຕໍ່ໜ້າພຣະລາຊະບັນລັງນັ້ນ. 4ແລະ
ຄວັນເຄື່ອງຫອມນັ້ນກໍລອຍຂຶ້ນໄປ ພ້ອມກັບຄຳໄຫວ້ວອນຂອງພວກໄພ່ພົນຂອງ ພຣະເຈົ້າ ຈາກ
ມືເທວະດາຊຶ່ງຢືນຢູ່ຕໍ່ພຣະພັກ ພຣະເຈົ້າ. 5ແລ້ວເທວະດາຕົນນັ້ນໄດ້ຖືໝໍ້ໄປເອົາໄຟຈາກແທ່ນໃສ່
ໃຫ້ເຕັມ ໂຍນໝໍ້ນັ້ນລົງເທິງແຜ່ນດິນໂລກ ກໍເກີດມີສຽງຟ້າຮ້ອງ, ສຽງຕ່າງໆ, ມີຟ້າແມບແລະ
ແຜ່ນດິນຫວັ່ນໄຫວ.

### ແກທັງເຈັດ

6ແລະເທວະດາເຈັດຕົນທີ່ຖືແກທັງເຈັດນັ້ນ ຕ່າງກໍຕຽມພ້ອມທີ່ຈະເປົ່າ.
7ເມື່ອເທວະດາຕົນແຣກເປົ່າແກຂຶ້ນ ໝາກເຫັບແລະໄຟປົນເລືອດຖືກຖິ້ມລົງມາຍັງແຜ່ນດິນ
ແຜ່ນໂລກຖືກໄໝ້ເສຍໜຶ່ງສ່ວນສາມ, ຕົ້ນໄມ້ກໍຖືກໄໝ້ເສຍໜຶ່ງສ່ວນສາມ, ແລະຫຍ້າຂຽວສົດ
ຖືກໄໝ້ເສຍທັງໝົດ.
8ເມື່ອເທວະດາ ຕົນທີ່ສອງເປົ່າແກຂຶ້ນ ກໍມີສິ່ງໜຶ່ງເໝືອນພູໜ່ວຍໃຫຍ່ທີ່ໄຟກຳລັງໄໝ້ຢູ່ ຖືກ
ຖິ້ມລົງທະເລ ແລະທະເລນັ້ນໄດ້ກາຍເປັນເລືອດເສຍໜຶ່ງສ່ວນສາມ. 9ສາລະພັດໃນທະເລທີ່ມີຊີ-
ວິດຢູ່ກໍຕາຍເສຍໜຶ່ງສ່ວນສາມ ແລະບັນດາເຮືອສະເພົາກໍຖືກທຳລາຍເສຍໜຶ່ງສ່ວນສາມ.
10ເມື່ອເທວະດາຕົນທີ່ສາມເປົ່າແກຂຶ້ນ ກໍມີດາວໃຫຍ່ດວງໜຶ່ງລຸກເປັນໄຟເໝືອນກະບອງຕົກ
ຈາກທ້ອງຟ້າ ດາວນັ້ນຕົກໃສ່ແມ່ນ້ຳໜຶ່ງສ່ວນສາມ ແລະຕົກໃສ່ນ້ຳພຸທັງຫລາຍ. 11ດາວດວງນີ້ມີ
ຊື່ວ່າ ອັບຊິນໂຕ ລົດຂອງນ້ຳຈຶ່ງກາຍເປັນລົດຂົມໜຶ່ງສ່ວນສາມ ແລະຄົນຈຳນວນຫລວງຫລາຍ
ໄດ້ຕາຍເພາະນ້ຳນັ້ນມີລົດຂົມ.
12ເມື່ອເທວະດາຕົນທີ່ສີ່ເປົ່າແກຂຶ້ນ ດວງອາທິດກໍຖືກທຳລາຍເສຍໜຶ່ງສ່ວນສາມ ດວງຈັນ
ແລະດວງດາວທັງຫລາຍກໍເໝືອນກັນ ຈຶ່ງມືດໄປເຖິງໜຶ່ງສ່ວນສາມ ກາງເວັນບໍ່ສະຫວ່າງໜຶ່ງ
ສ່ວນສາມ ແລະກາງຄືນກໍເໝືອນກັນ. 13ແລ້ວຂ້າພະເຈົ້າກໍເບິ່ງ ແລະໄດ້ຍິນນົກອິນທີໂຕໜຶ່ງທີ່
ບິນຢູ່ໃນທ້ອງຟ້າ ຮ້ອງດັງຂຶ້ນວ່າ, "ວິບັດ, ວິບັດ, ວິບັດຈະມີແກ່ຄົນທັງຫລາຍທີ່ຢູ່ເທິງແຜ່ນດິນ
ໂລກ ເພາະສຽງແກທີ່ເຫລືອ ຊຶ່ງເທວະດາສາມຕົນຈວນຈະເປົ່ານັ້ນ."

## ບົດທີ 9

1ເມື່ອເທວະດາຕົນທີ່ຫ້າເປົ່າແກຂຶ້ນ ຂ້າພະເຈົ້າກໍເຫັນດາວດວງໜຶ່ງຕົກຈາກຟ້າລົງມາຍັງ
ແຜ່ນດິນໂລກ ໄດ້ຮັບພຣະລາຊະທານຂໍກະແຈສຳລັບປ່ອງເຫວເລິກ. 2ເມື່ອດາວດວງນັ້ນໄຂ
ປ່ອງເຫວອອກ ກໍມີຄວັນພຸ່ງຂຶ້ນມາຈາກເຫວນັ້ນເໝືອນຄວັນທີ່ເຕົາໃຫຍ່ ດວງອາທິດແລະອາ-
ກາດກໍມືດໄປເພາະເຫດຄວັນທີ່ຂຶ້ນມາຈາກເຫວນັ້ນ. 3ມີຝູງຕັກແຕນບິນອອກມາຈາກຄວັນນັ້ນມາ
ຍັງແຜ່ນດິນໂລກ ພຣະເຈົ້າຊົງພຣະລາຊະທານອຳນາດແກ່ຕັກແຕນນັ້ນ ເໝືອນກັບອຳນາດ
ຂອງແມງງອດທີ່ແຜ່ນດິນໂລກ. 4ພຣະເຈົ້າຊົງຫ້າມມັນບໍ່ໃຫ້ທຳຮ້າຍຫຍ້າເທິງແຜ່ນດິນໂລກ,
ສິ່ງຂຽວສົດຫລືຕົ້ນໄມ້ໃດໆ ແຕ່ໃຫ້ທຳຮ້າຍຄົນເຫລົ່ານັ້ນທີ່ບໍ່ມີປະທັບຕາຂອງ ພຣະເຈົ້າທີ່ໜ້າ-
ຜາກຂອງເຂົາເທົ່ານັ້ນ. 5ພຣະອົງບໍ່ຊົງອະນຸຍາດໃຫ້ມັນຂ້າຄົນເຫລົ່ານັ້ນ ແຕ່ໃຫ້ທໍລະມານເຂົາ
ໃນລະຫວ່າງຫ້າເດືອນ ການທໍລະມານນັ້ນເໝືອນກັບແມງງອດຕອດ. 6ໃນລະຫວ່າງນັ້ນຄົນທັງ-

ຫລາຍຈະສະແຫວງຫາຄວາມຕາຍ ແຕ່ຈະບໍ່ພົບຈັກເທື່ອ ເຂົາປາດຖະໜາຈະຕາຍ ແຕ່ຄວາມ
ຕາຍຈະປົບໜີໄປຈາກເຂົາ.
7ລັກສະນະອາການຕັກແຕນເຫລົ່ານັ້ນເໝືອນມ້າທີ່ຫ້າງໄວ້ສຳລັບການເສິກເທິງຫົວມັນມີສິ່ງ
ໜຶ່ງເໝືອນພວງມາໄລຄຳ ໜ້າຂອງມັນເໝືອນໜ້າມະນຸດ. 8ຜົມມັນເໝືອນຜົມຜູ້ຍິງ ແລະແຂ້ວ
ມັນເໝືອນແຂ້ວສິງ. 9ມັນມີສິ່ງໜຶ່ງເໝືອນເຄື່ອງເຫລັກປ້ອງກັນໜ້າເອິກ ສຽງປີກຂອງມັນເໝືອນ
ສຽງລໍດທຽມມ້າຈຳນວນຫລາຍແລ່ນເຂົ້າຮົບເສິກ. 10ມັນມີຫາງເໝືອນຫາງແມງງອດ ມີໄລຕອດ
ໃນຫາງນັ້ນ ມັນມີອຳນາດທີ່ຈະທຳຮ້າຍມະນຸດຕະຫລອດຫ້າເດືອນ. 11ມັນມີກະສັດອົງໜຶ່ງຄຸ້ມ
ຄອງ ກະສັດນັ້ນຄືບໍລິວານຂອງເຫວເລິກນັ້ນ ບໍລິວານນັ້ນຕາມພາສາເຮັບເຣີເອີ້ນ ອາບັດໂດນ
ແລະພາສາກຣີກເອີ້ນວ່າ ອາໂປລີໂອນ.
12ວິບັດອັນຕົ້ນຜ່ານໄປແລ້ວ ເບິ່ງແມ, ຍັງຈະມີວິບັດອີກສອງປະການທີ່ຈະເກີດຂຶ້ນໃນພາຍ
ໜ້າ.
13ເມື່ອເທວະດາຕົນທີ່ຫົກເປົ່າແກຂຶ້ນ ຂ້າພະເຈົ້າໄດ້ຍິນສຽງອອກມາຈາກຮູບເຂົາທີ່ແຈທັງສີ່
ຂອງແທ່ນຄຳ ຊຶ່ງຢູ່ຕໍ່ພຣະພັກພຣະເຈົ້ານັ້ນ. 14ສັ່ງແກ່ເທວະດາຕົນທີ່ຫົກທີ່ຖືແກນັ້ນວ່າ, "ຈົ່ງ
ແກ້ປ່ອຍເທວະດາທັງສີ່ ຊຶ່ງຖືກມັດໄວ້ທີ່ແມ່ນ້ຳໃຫຍ່ເອຟຣາດນັ້ນເສຍ. 15ເທວະດາເຫລົ່ານັ້ນ
ຖືກປ່ອຍໄປແລ້ວ ຄືເທວະດາທັງສີ່ທີ່ພຣະເຈົ້າຊົງຈັດໄວ້ແລ້ວສຳລັບຊົ່ວໂມງ, ວັນ, ເດືອນ,
ແລະປີນັ້ນ ເພື່ອໄປຂ້າມະນຸດໜຶ່ງສ່ວນສາມເສຍ. 16ມີພົນທະຫານມ້າສອງຮ້ອຍລ້ານຄົນ ຕາມ
ຈຳນວນທີ່ຂ້າພະເຈົ້າໄດ້ຍິນ. 17ໃນນິມິດທີ່ຂ້າພະເຈົ້າໄດ້ເຫັນກໍເປັນດັ່ງນີ້ ມີຝູງມ້າ ແລະຜູ້ທີ່ຂີ່ມ້າ
ນັ້ນມີເຄື່ອງປ້ອງກັນເອິກເປັນສີໄຟ, ສີນ້ຳເງິນ, ແລະມີມາດ ຫົວມ້າເຫລົ່ານັ້ນເໝືອນຫົວສິງ ມີ
ໄຟແລະຄວັນກັບມາດພຸ່ງອອກມາຈາກປາກມັນ. 18ມະນຸດຖືກຂ້າເສຍໜຶ່ງສ່ວນສາມດ້ວຍໄພ
ອັນຕະລາຍສາມຢ່າງນີ້ຄື ໄຟ, ຄວັນ, ແລະມາດ ທີ່ພຸ່ງອອກມາຈາກປາກຂອງມ້ານັ້ນ. 19ເພາະ
ລິດຂອງມ້ານັ້ນມີຢູ່ໃນປາກແລະໃນຫາງຂອງມັນຄືກັບງູ ແລະມີຫົວ ສິ່ງເຫລົ່ານີ້ເຂົາໃຊ້ທຳຮ້າຍ
ມະນຸດໄດ້. 20ສ່ວນມະນຸດທັງຫລາຍທີ່ຍັງເຫລືອຢູ່ ຊຶ່ງບໍ່ໄດ້ຖືກຂ້າດ້ວຍໄພອັນຕະລາຍເຫລົ່ານັ້ນ
ກໍບໍ່ໄດ້ກັບໃຈເສຍໃໝ່ຈາກກິດຈະການທີ່ຕົນໄດ້ເຮັດ, ບໍ່ໄດ້ເລີກບູຊາຜີ, ບູຊາພຣະທຽມທີ່ເຮັດ
ດ້ວຍຄຳ, ເງິນ, ທອງເຫລືອງ, ດ້ວຍຫີນແລະໄມ້ ຊຶ່ງບໍ່ສາມາດຈະເຫັນ, ຈະໄດ້ຍິນ, ຫລືຈະ
ຍ່າງໄປໄດ້. 21ເຂົາບໍ່ໄດ້ກັບໃຈເສຍໃໝ່ເລີກຈາກການຂ້າຟັນກັນ, ການເຊື່ອເວດມົນຄາຖາ,
ການຜິດຊາຍຍິງ, ແລະການລັກຂອງຕົນ.

# ບົດທີ 10

## ເທວະດາແລະໜັງສືມ້ວນນ້ອຍ

1ຂ້າພະເຈົ້າໄດ້ເຫັນເທວະດາຜູ້ມີລິດຕົນໜຶ່ງລົງມາຈາກສະຫວັນ ມີເມກປົກຄຸມຕົວໄວ້ແລະມີ
ຮຸ້ງກິນນ້ຳຢູ່ເທິງຫົວ ໜ້າຂອງເພິ່ນເໝືອນດວງອາທິດແລະຂາກໍເໝືອນເສົາໄຟ. 2ເພິ່ນຖືໜັງສື
ນ້ອຍໜຶ່ງມ້ວນທີ່ພີຢູ່ໃນມື ຕີນເບື້ອງຂວາຢຽບນ້ຳທະເລແລະຕີນເບື້ອງຊ້າຍຢຽບບົກ. 3ເພິ່ນຮ້ອງ
ດັງເໝືອນດັ່ງສິງຮ້ອງ ເມື່ອເພິ່ນຮ້ອງ ສຽງຟ້າຮ້ອງທັງເຈັດກໍດັງຂຶ້ນ. 4ເມື່ອສຽງຟ້າຮ້ອງທັງເຈັດ

ດັງຂຶ້ນແລ້ວ ຂ້າພະເຈົ້າກໍລົງມືຈະຂຽນ ແຕ່ຂ້າພະເຈົ້າໄດ້ຍິນພຣະສຸລະສຽງຈາກສະຫວັນຊົງ
ກ່າວວ່າ, “ສິ່ງທີ່ຟ້າຮ້ອງທັງເຈັດໄດ້ຮ້ອງແລ້ວນັ້ນ ຈົ່ງປະທັບຕາອັດໄວ້ ຢ່າໄດ້ຂຽນ.” 5ຝ່າຍເທ-
ວະດາຕົນທີ່ຂ້າພະເຈົ້າໄດ້ເຫັນຢືນຢູ່ເທິງທະເລແລະເທິງບົກນັ້ນໄດ້ຍໍມືຂວາຂຶ້ນໃສ່ຟ້າ. 6ແລະ
ສາບານໂດຍອ້າງອອກພຣະນາມຂອງພຣະອົງ ຜູ້ຊົງຢູ່ເປັນນິດ, ຜູ້ຊົງສ້າງຟ້າສະຫວັນແລະສັບ-
ພະສິ່ງທີ່ຢູ່ໃນສະຫວັນນັ້ນ, ຊົງສ້າງແຜ່ນດິນໂລກແລະສັບພະສິ່ງທີ່ມີຢູ່ໃນແຜ່ນດິນໂລກນັ້ນ,
ແລະຊົງສ້າງທະເລກັບສັບພະສິ່ງທີ່ມີຢູ່ໃນທະເລນັ້ນ ວ່າຈະບໍ່ມີການຊ້ານານອີກຕໍ່ໄປແລ້ວ. 7ແຕ່
ໃນເວລາເທວະດາຕົນທີ່ເຈັດອອກສຽງ ຄືເວລາເປົ່າແກນັ້ນ ຄວາມເລິກລັບຂອງພຣະເຈົ້າ ທີ່
ພຣະອົງໄດ້ຊົງປະກາດເປັນຂ່າວປະເສີດແກ່ຂ້ອຍໃຊ້ຂອງພຣະອົງຄືພວກຜູ້ທຳນວາຍນັ້ນ ກໍຈະ
ສຳເລັດ. 8ແລ້ວພຣະສຸລະສຽງທີ່ຂ້າພະເຈົ້າໄດ້ຍິນຈາກສະຫວັນນັ້ນຊົງກ່າວກັບຂ້າພະເຈົ້າອີກ
ວ່າ, “ຈົ່ງໄປຮັບເອົາໜັງສືມ້ວນນັ້ນ ທີ່ພີຢູ່ໃນມືຂອງເທວະດາຕົນທີ່ຢືນຢູ່ເທິງທະເລແລະເທິງບົກ
ນັ້ນ.” 9ຂ້າພະເຈົ້າຈຶ່ງໄປຫາເທວະດາຕົນນັ້ນ ແລະຂໍເອົາໜັງສືມ້ວນນ້ອຍນັ້ນ ເພິ່ນໄດ້ຕອບຂ້າ-
ພະເຈົ້າ ວ່າ, “ເອົາໄປກິນເສຍ ມັນຈະເຮັດໃຫ້ທ້ອງເຈົ້າຂົມ ແຕ່ໃນປາກຂອງເຈົ້າຈະຫວານ
ເໝືອນນໍ້າເຜີ້ງ.” 10ຂ້າພະເຈົ້າໄດ້ຮັບເອົາໜັງສືມ້ວນນ້ອຍຈາກມືເທວະດາແລ້ວກໍກິນເສຍ ໃນ
ປາກຂອງຂ້າພະເຈົ້າກໍຫວານເໝືອນນໍ້າເຜີ້ງ ແຕ່ເມື່ອກິນແລ້ວທ້ອງຂອງຂ້າເຈົ້າກໍຂົມ. 11ແລ້ວ
ຂ້າພະເຈົ້າໄດ້ຮັບສັ່ງວ່າ, “ເຈົ້າຕ້ອງທຳນວາຍອີກເຖິງເລື່ອງຊົນຊາດທັງຫລາຍ, ບັນດາປະຊາ-
ຊາດ, ພາສາ, ແລະກະສັດທັງຫລາຍ.”

# ບົດທີ 11

## ພະຍານທັງສອງ

1ມີຜູ້ໜຶ່ງໄດ້ເອົາໄມ້ແທກອັນໜຶ່ງເໝືອນໄມ້ຄ້ອນເທົ້າໃຫ້ຂ້າພະເຈົ້າ ແລ້ວສັ່ງວ່າ, “ຈົ່ງລຸກຂຶ້ນ
ໄປແທກພຣະວິຫານຂອງພຣະເຈົ້າກັບແທ່ນບູຊາ ແລະນັບຈຳນວນຄົນທັງຫລາຍທີ່ນະມັດສະ-
ການຢູ່ທີ່ນັ້ນ. 2ແຕ່ບໍລິເວນຂ້າງນອກພຣະວິຫານນັ້ນຈົ່ງເວັ້ນເສຍ ຢ່າໄດ້ແທກ ເພາະວ່າບ່ອນ
ນັ້ນໄດ້ຊົງມອບໃຫ້ຄົນຕ່າງຊາດແລ້ວ ເຂົາຈະຢຽບຢ່ຳນະຄອນສັກສິດໃນລະຫວ່າງສີ່ສິບສອງ
ເດືອນ. 3ເຮົາຈະອະນຸຍາດໃຫ້ພະຍານທັງສອງຂອງເຮົາ ແລະເຂົາຈະນຸ່ງຫົ່ມຜ້າຫຍາບ ແລະ
ປະກາດພຣະທຳໄປຕະຫລອດພັນສອງຮ້ອຍຫົກສິບວັນ.” 4ພະຍານທັງສອງນັ້ນຄືຕົ້ນກອກເທດ
ສອງຕົ້ນ ແລະເຄື່ອງຮອງຕີນໂຄມສອງອັນທີ່ຕັ້ງຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າຂອງແຜ່ນດິນ
ໂລກ. 5ຖ້າຜູ້ໃດຢາກທຳຮ້າຍພະຍານທັງສອງນັ້ນ ໄຟກໍຈະພຸ່ງອອກຈາກປາກຂອງເຂົາເຜົາຜານ
ສັດຕູນັ້ນເສຍ ແມ່ນແລ້ວ, ຖ້າຜູ້ໃດຢາກທຳຮ້າຍເຂົາ ຜູ້ນັ້ນກໍຕ້ອງຕາຍຢ່າງນັ້ນ. 6ຝ່າຍພະຍານ
ທັງສອງນັ້ນມີສິດອຳນາດອັດທ້ອງຟ້າໄວ້ ເພື່ອບໍ່ໃຫ້ຝົນຕົກໃນລະຫວ່າງວັນເຫລົ່ານັ້ນ ທີ່ເຂົາກຳ-
ລັງປະກາດພຣະທຳ ແລະມີສິດອຳນາດໃຫ້ນໍ້າກາຍເປັນເລືອດໄດ້ ທັງມີສິດອຳນາດບັນດານໃຫ້
ໄພອັນຕະລາຍທຸກຢ່າງທຳລະມານແຜ່ນດິນໂລກໄດ້ທຸກເວລາຕາມຄວາມປາດຖະໜາ. 7ເມື່ອການ
ພະຍານຂອງເຂົາສິ້ນສຸດແລ້ວ ສັດຮ້າຍທີ່ຂຶ້ນມາຈາກເຫວເລິກນັ້ນ ກໍຈະສູ້ຮົບກັບເຂົາ, ຈະຊະ-
ນະເຂົາ, ແລະຈະຂ້າເຂົາເສຍ. 8ແລະສົບຂອງເຂົາຈະຢູ່ທີ່ຖະໜົນໃນມະຫານະຄອນນັ້ນ ຊຶ່ງ

ຕາມຄວາມປຽບທຽບເອີ້ນວ່າເມືອງໂຊໂດມ ແລະເມືອງເອຢິບ ອັນເປັນເມືອງທີ່ອົງພຣະຜູ້ເປັນ-
ເຈົ້າຂອງເຂົາຊົງຖືກຄຶງໄວ້ທີ່ໄມ້ກາງແຂນ. [9]ຄົນຫລາຍຊາດ, ຫລາຍກະກຸນ, ຫລາຍພາສາ,
ແລະຫລາຍປະເທດ ຈະເຫັນສົບຂອງເຂົາຕະຫລອດສາມວັນເຄິ່ງ ແລະຈະບໍ່ຍອມໃຫ້ເອົາສົບ
ເຫລົ່ານັ້ນບັນຈຸໄວ້ໃນອຸບໂມງ. [10]ແລະບັນດາຊາວໂລກຈະຊົມຊື່ນຍິນດີເພາະເຂົາ, ຈະສະໜຸກ
ມ່ວນຊື່ນ, ຈະໃຫ້ຂອງຂວັນເຊິ່ງກັນແລະກັນ ເພາະຜູ້ປະກາດພຣະທຳທັງສອງນີ້ໄດ້ທໍລະມານ
ຊາວໂລກທັງຫລາຍ. [11]ເມື່ອສາມວັນເຄິ່ງຜ່ານພົ້ນໄປແລ້ວ ລົມຊີວິດຊຶ່ງມາຈາກພຣະເຈົ້າໄດ້
ເຂົ້າໃນສົບຂອງເຂົາ ເຂົາກໍລຸກຢືນຂຶ້ນ ແລະຄົນທັງຫລາຍທີ່ໄດ້ເຫັນເຂົາກໍມີຄວາມຢ້ານກົວຢ່າງ
ໃຫຍ່ຫລວງ. [12]ຄົນເຫລົ່ານັ້ນໄດ້ຍິນພຣະສຸລະສຽງດັງມາຈາກສະຫວັນຊົງກ່າວແກ່ເຂົາວ່າ, “ຈົ່ງ
ຂຶ້ນມາທີ່ນີ້” ແລະພວກສັດຕູກໍໄດ້ເຫັນເຂົາຂຶ້ນເມືອໃນເມກເຂົ້າສູ່ສະຫວັນ. [13]ໃນເວລາໂມງນັ້ນ
ບັງເກີດແຜ່ນດິນໄຫວຢ່າງໃຫຍ່ ແລະໜຶ່ງສ່ວນສິບຂອງນະຄອນນັ້ນກໍເພພັງລົງ ຈຳນວນຄົນ
ຕາຍເພາະແຜ່ນດິນໄຫວນັ້ນມີເຈັດພັນຄົນ ແລະຄົນທີ່ຍັງເຫລືອຢູ່ກໍເກີດມີຄວາມຢ້ານຢ່າງໃຫຍ່
ຫລວງ ຈຶ່ງພາກັນຖວາຍພຣະກຽດແດ່ພຣະເຈົ້າແຫ່ງສະຫວັນ.

[14]ວິບັດຖ້ວນສອງກໍຜ່ານໄປແລ້ວ ເບິ່ງແມ, ວິບັດຖ້ວນສາມກໍຈະມາເຖິງໃນໄວໆ ນີ້ແຫລະ.

## ແກ ທີ່ ເຈັດ

[15]ເມື່ອເທວະດາຕົນທີ່ເຈັດໄດ້ເປົ່າແກຂຶ້ນແລ້ວ ມີຫລາຍສຽງໃນສະຫວັນກ່າວດັງຂຶ້ນວ່າ,

“ລາຊະອານາຈັກແຫ່ງພິພົບນີ້
ໄດ້ກາຍເປັນກຳມະສິດແຫ່ງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ
ແລະເປັນຂອງພຣະຄຣິດຂອງພຣະອົງ
ພຣະອົງຈະຊົງສາເຫວີຍລາດຕະຫລອດໄປເປັນນິດ.”

[16]ສ່ວນຜູ້ອາວຸໂສຊາວສີ່ທ່ານນັ້ນ ຊຶ່ງນັ່ງຢູ່ທີ່ບັນລັງຂອງຕົນຕໍ່ພຣະພັກພຣະເຈົ້າ ກໍໝູບລົງ
ນະມັດສະການພຣະເຈົ້າ. [17]ກາບທູນວ່າ,

“ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຜູ້ຊົງລິດທານຸພາບສູງສຸດ,
ຜູ້ຊົງດຳລົງຢູ່ໃນປັດຈຸບັນນີ້ ແລະຜູ້ໄດ້ດຳລົງຢູ່ໃນຄາວກ່ອນ
ພວກຂ້າພະອົງໂມທະນາພຣະເດດພຣະຄຸນຂອງພຣະອົງ
ເພາະພຣະອົງໄດ້ຊົງໃຊ້ລິດທານຸພາບອັນໃຫຍ່ຫລວງຂອງພຣະອົງ
ຈຶ່ງໄດ້ຊົງຕັ້ງຕົ້ນສະເຫວີຍລາດແຜ່ນດິນໂລກ.
[18] ຝ່າຍນານາຊາດກໍມີຄວາມເຄືອງແຄ້ນ
ແຕ່ພຣະພິໂລດຂອງພຣະອົງກໍມາເຖິງແລ້ວ
ເຖິງເວລາທີ່ພຣະອົງຈະຊົງພິພາກສາບັນດາຄົນທີ່ຕາຍແລ້ວ
ແລະເຖິງເວລາທີ່ຈະຊົງປະທານລາງວັນ ແກ່ພວກຂ້ອຍໃຊ້ຂອງພຣະອົງ
ຄືພວກຜູ້ປະກາດພຣະທຳແລະພວກໄພ່ພົນຂອງພຣະອົງ
ແລະແກ່ທຸກຄົນທີ່ຢຳເກງພຣະນາມຂອງພຣະອົງ ທັງຜູ້ນ້ອຍແລະຜູ້ໃຫຍ່
ແລະເຖິງເວລາແລ້ວ ທີ່ພຣະອົງຈະຊົງທຳລາຍພວກຄົນທີ່ທຳລາຍແຜ່ນດິນໂລກ.”

19ແລ້ວພຣະວິຫານຂອງ ພຣະເຈົ້າ ໃນມະຫາສະຫວັນກໍໄຂອອກ ໃນພຣະວິຫານນັ້ນກໍເຫັນມີ
ຫີບພຣະສັນຍາຂອງພຣະອົງ ແລ້ວກໍບັງເກີດມີຟ້າແມບ, ສຽງຕ່າງໆ ກັບຟ້າຮ້ອງ, ແຜ່ນດິນ
ໄຫວ, ທັງໝາກເຫັບຢ່າງຫລວງຫລາຍ.

# ບົດທີ 12

## ຜູ້ຍິງແລະພະຍານາກ

1ມີໝາຍສຳຄັນອັນຍິ່ງໃຫຍ່ປະກົດໃນສະຫວັນ ຄືຜູ້ຍິງຄົນໜຶ່ງມີດວງອາທິດຄຸມຕົວເໝືອນອາ-
ພອນ, ມີດວງຈັນຢູ່ໃຕ້ຕີນ, ມີດາວສິບສອງດວງຢູ່ເທິງຫົວເໝືອນພວງມາໄລ. 2ຍິງນັ້ນມີທ້ອງ
ແລະຮ້ອງຄາງເຈັບ ປວດຢູ່ ກຳລັງຈະເກີດລູກ. 3ມີໝາຍສຳຄັນອີກຢ່າງໜຶ່ງປະກົດໃນສະຫວັນ
ດັ່ງນີ້, ມີພະຍານາກໃຫຍ່ສີແດງໂຕໜຶ່ງ ມີເຈັດຫົວ, ສິບເຂົາຢູ່ເທິງຫົວນັ້ນມີມົງກຸດເຈັດອັນ.
4ຫາງພະຍານາກໄດ້ຟາດດວງດາວໃນທ້ອງຟ້າໜຶ່ງສ່ວນສາມລົງໃສ່ແຜ່ນດິນໂລກ ແລະພະຍາ
ນາກໂຕນັ້ນຢືນຢູ່ຕໍ່ໜ້າຜູ້ທີ່ຈວນຈະເກີດລູກ ເພື່ອຈະກິນລູກນັ້ນເມື່ອເກີດແລ້ວ. 5ຜູ້ຍິງນັ້ນໄດ້
ເກີດລູກຊາຍ ຜູ້ຊຶ່ງຈະປົກຄອງປະຊາຊາດທັງປວງດ້ວຍຄ້ອນເຫລັກ ແລະລູກນັ້ນໄດ້ຖືກຊົງຍົກ
ຂຶ້ນເມືອເຖິງ ພຣະເຈົ້າ ແລະເຖິງພຣະລາຊະບັນລັງຂອງພຣະອົງ. 6ຝ່າຍຍິງນັ້ນໄດ້ໜີເຂົ້າໄປອາ
ໃສຢູ່ໃນປ່າ ທີ່ນາງມີບ່ອນຢູ່ ຊຶ່ງ ພຣະເຈົ້າ ໄດ້ຊົງຈັດຕຽມໄວ້ໃຫ້ ເພື່ອນາງຈະໄດ້ຮັບການລ້ຽງດູ
ຢູ່ທີ່ນັ້ນລະຫວ່າງພັນສອງຮ້ອຍຫົກສິບວັນ.

7ຂະນະນັ້ນໄດ້ເກີດສົງຄາມຂຶ້ນໃນຟ້າສະຫວັນ ມີກາເອນກັບເທບບໍລິວານຂອງຕົນໄດ້ສູ້ຮົບ
ກັບພະຍານາກ ພະຍານາກກັບບໍລິວານຂອງມັນກໍຕໍ່ສູ້. 8ແຕ່ຝ່າຍພະຍານາກບໍ່ອາດໄຊຊະນະ
ໄດ້ ແລະພວກພະຍານາກຈຶ່ງບໍ່ມີບ່ອນຢູ່ໃນສະຫວັນຕໍ່ໄປອີກ. 9ພະຍານາກໃຫຍ່ຊຶ່ງເປັນງູແຕ່
ດຶກດຳບັນທີ່ເຂົາເອີ້ນວ່າ ເດຍໂບໂລ, ແລະຊາຕານ, ຜູ້ຫລອກລວງມະນຸດທັງໂລກ ກໍຖືກຊັດ
ຖິ້ມລົງເສຍ ພະຍານາກກັບບໍລິວານຂອງມັນກໍຖືກຖິ້ມລົງເທິງແຜ່ນດິນໂລກ. 10ແລະຂ້າພະເຈົ້າ
ໄດ້ຍິນສຽງດັງຂຶ້ນໃນສະຫວັນວ່າ,

> "ບັດນີ້ຄວາມລອດພົ້ນ, ລິດເດດ, ແລະລາຊະອານາຈັກແຫ່ງ ພຣະເຈົ້າ ຂອງ
> ເຮົາທັງຫລາຍ ກັບທັງອຳນາດ ພຣະຄຣິດ ຂອງພຣະອົງໄດ້ມາເຖິງແລ້ວ ເພາະ-
> ວ່າຜູ້ທີ່ກ່າວໂທດພວກພີ່ນ້ອງຂອງເຮົາ ຕໍ່ພຣະພັກ ພຣະເຈົ້າ ຂອງເຮົາທັງກາງ-
> ເວັນແລະກາງຄືນ ກໍໄດ້ຖືກຖິ້ມລົງເສຍແລ້ວ. 11ເຂົາເຫລົ່ານັ້ນໄດ້ຊະນະພະຍາ
> ນາກດ້ວຍພຣະໂລຫິດຂອງພຣະເມສານ້ອຍ ແລະເພາະຄຳພະຍານຂອງເຂົາເອງ
> ເພາະເຖິງແມ່ນວ່າເຂົາຈະຕາຍກໍບໍ່ເສຍດາຍຊີວິດຂອງຕົນ. 12ເພາະເຫດນັ້ນ
> ແຫລະ, ສະຫວັນກັບບັນດາຜູ້ທີ່ຢູ່ໃນສະຫວັນຈົ່ງຊົມຊື່ນຍິນດີ ແຕ່ວິບັດຈະມີແກ່
> ແຜ່ນດິນໂລກແລະນ້ຳທະເລ ເພາະວ່າມານໄດ້ລົງມາຫາເຈົ້າດ້ວຍຄວາມຄຽດ
> ແຄ້ນອັນໃຫຍ່ ເພາະວ່າມັນຮູ້ວ່າເວລາຂອງມັນມີນ້ອຍ."

13ເມື່ອພະຍານາກນັ້ນເຫັນວ່າຕົນຖືກຖິ້ມລົງເທິງແຜ່ນດິນໂລກແລ້ວ ມັນກໍໄລ່ຕິດຕາມຍິງທີ່
ເກີດລູກຊາຍນັ້ນ. 14ແຕ່ ພຣະເຈົ້າ ຊົງປະທານປີກນົກອິນທີໃຫຍ່ສອງປີກໃຫ້ແກ່ຍິງນັ້ນ ເພື່ອໃຫ້

ນາງບິນໜີຈາກໜ້າງູນັ້ນເຂົ້າໄປໃນປ່າ ເຖິງບ່ອນທີ່ນາງຈະໄດ້ຮັບການລ້ຽງດູໃນຊົ່ວເວລາໜຶ່ງ,
ສອງເວລາ, ກັບເຄິ່ງເວລາ. 15ງູນັ້ນໄດ້ພົ່ນນໍ້າອອກຈາກປາກເໝືອນແມ່ນໍ້າ ໄຫລຕາມຍິງນັ້ນ
ເພື່ອຈະໃຫ້ພັດຍິງນັ້ນໄປ. 16ແຕ່ແມ່ນດິນໄດ້ຊ່ອຍຍິງນັ້ນໄວ້ ໂດຍໄດ້ຍະຊ່ອງຮັບກືນເອົານໍ້າທີ່
ພະຍານາກໄດ້ພົ່ນອອກມານັ້ນ. 17ຝ່າຍພະຍານາກກໍຄຽດແຄ້ນຍິງນັ້ນ ຈຶ່ງອອກໄປສູ້ຮົບກັບ
ເຊື້ອສາຍຂອງຍິງນັ້ນທີ່ເຫລືອຢູ່ ຄືພວກທີ່ຖືຮັກສາຂໍ້ບັນຍັດຂອງ ພຣະເຈົ້າ ແລະທີ່ຍຶດຖືຄຳພະ-
ຍານຝ່າຍ ພຣະເຢຊູ. 18ມັນ[ກ] ໄດ້ຢືນຢູ່ທີ່ຫາດຊາຍທະເລ.

# ບົດທີ 13

## ສັດຮ້າຍສອງໂຕ

1ແລະຂ້າພະເຈົ້າໄດ້ເຫັນສັດຮ້າຍສອງໂຕໜຶ່ງຂຶ້ນມາຈາກທະເລ ມີສິບເຂົາເຈັດຫົວທີ່ເຂົາທັງ
ສິບມີມົງກຸດສິບອັນ ແລະທີ່ຫົວທັງເຈັດນັ້ນມີຊື່ເປັນຄຳໝິ່ນປະໝາດ. 2ສັດຮ້າຍທີ່ຂ້າພະເຈົ້າໄດ້
ເຫັນນັ້ນ ຕົວເໝືອນເສືອດາວ, ຕີນເໝືອນຕີນໝີ, ແລະປາກເໝືອນປາກສິງ ພະຍານາກໄດ້ໃຫ້
ລິດເດດແລະບັນລັງກັບອຳນາດອັນໃຫຍ່ຫລວງຂອງຕົນແກ່ສັດຮ້າຍນັ້ນ. 3ຫົວຂອງສັດຮ້າຍນັ້ນ
ຫົວໜຶ່ງປະກົດເໝືອນກັບວ່າຖືກຟັນເຖິງຕາຍແລ້ວ ແຕ່ບາດແຜອັນໜ້າຈະຕາຍນັ້ນໄດ້ຖືກປົວໃຫ້
ດີແລ້ວ ຄົນທັງໂລກໄດ້ຕິດຕາມສັດຮ້າຍນັ້ນໄປດ້ວຍຄວາມອັດສະຈັນໃຈ. 4ເຂົາບູຊາພະຍານາກ
ເພາະມັນໄດ້ໃຫ້ອຳນາດແກ່ສັດຮ້າຍນັ້ນ ແລະເຂົາໄດ້ບູຊາສັດຮ້າຍນັ້ນໂດຍກ່າວວ່າ, "ໃຜຈະ
ປຽບປານກັບສັດນີ້ໄດ້ ແລະໃຜຈະສາມາດສູ້ຮົບກັບສັດນີ້ໄດ້." 5ພຣະເຈົ້າຊົງອະນຸຍາດໃຫ້ສັດ
ນັ້ນມີປາກເວົ້າຄຳຈອງຫອງແລະໝິ່ນປະໝາດ ແລະຊົງຍອມໃຫ້ມັນມີອຳນາດເຮັດຢ່າງນັ້ນຕະ-
ຫລອດສີ່ສິບສອງເດືອນ. 6ມັນຕັ້ງຕົ້ນກ່າວຄຳໝິ່ນປະໝາດ ພຣະເຈົ້າ, ຕໍ່ພຣະນາມຂອງພຣະອົງ,
ຕໍ່ສະຖານທີ່ສະຖິດຂອງພຣະອົງ, ແລະຕໍ່ຜູ້ທີ່ຢູ່ໃນສະຫວັນ. 7ແລະໄດ້ຊົງຍອມໃຫ້ມັນສູ້ຮົບກັບ
ບັນດາໄພ່ພົນຂອງ ພຣະເຈົ້າ ແລະຊະນະເຂົາ ຍັງຊົງປະທານໃຫ້ມັນມີອຳນາດເໜືອຊົນທຸກກະ
ກຸນ, ທຸກຊາດ, ທຸກພາສາ, ແລະທຸກປະເທດ. 8ບັນດາຄົນທັງປວງທີ່ຢູ່ໃນໂລກຈະບູຊາສັດຮ້າຍ
ນັ້ນ ຄືທຸກຄົນທີ່ບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດ ຕັ້ງແຕ່ຊົງສ້າງໂລກຄືທະບຽນຂອງພຣະເມສາ
ນ້ອຍທີ່ຊົງຖືກຂ້າເສຍນັ້ນ. 9ຖ້າຜູ້ໃດມີຫູ ຈົ່ງຟັງເອົາເທີ້ນ.

10 "ຜູ້ໃດທີ່ກຳນົດໄວ້ໃຫ້ເປັນຊະເລີຍ
ຜູ້ນັ້ນກໍຈະຕ້ອງເປັນຊະເລີຍ
ຜູ້ໃດທີ່ກຳນົດໄວ້ໃຫ້ຕາຍດ້ວຍດາບ
ຜູ້ນັ້ນກໍຈະຕ້ອງຖືກຂ້າດ້ວຍດາບ."

ນີ້ແຫລະ, ຄືຄວາມອົດທົນແລະຄວາມເຊື່ອທີ່ພວກໄພ່ພົນຂອງ ພຣະເຈົ້າ ຈະຕ້ອງມີ.

11ແລ້ວຂ້າພະເຈົ້າເຫັນສັດຮ້າຍໂຕໜຶ່ງຂຶ້ນມາຈາກພື້ນດິນ ມີສອງເຂົາເໝືອນແກະນ້ອຍແລະ
ກ່າວຄຳເໝືອນພະຍານາກ. 12ມັນໃຊ້ອຳນາດ ສັດຮ້າຍໂຕເດີມນັ້ນຢ່າງຄົບຖ້ວນ ແລະຕໍ່ໜ້າມັນ
ມັນເຮັດໃຫ້ໂລກແລະຄົນທີ່ຢູ່ໃນໂລກບູຊາສັດຮ້າຍໂຕເດີມນັ້ນຊຶ່ງບາດແຜອັນເປັນໜ້າຈະຕາຍ

[ກ]ສຳເນົາຕົ້ນສະບັບບາງສະບັບມີຄຳວ່າ "ຂ້າພະເຈົ້າ" ຈຶ່ງໃຫ້ປະໂຫຍກນີ້ຕິດຕໍ່ກັບ ບົດ 13 ຂໍ້ 1.

ນັ້ນໄດ້ຖືກປົວໃຫ້ດີແລ້ວ. [13]ສັດຮ້າຍນີ້ສະແດງໝາຍສຳຄັນອັນໃຫຍ່ ຈົນເຮັດໃຫ້ໄຟຕົກຈາກຟ້າ-
ລົງສູ່ແຜ່ນດິນໂລກຕໍ່ຕາມະນຸດ. [14]ມັນຫລອກລວງຄົນທັງຫລາຍທີ່ຢູ່ໃນໂລກດ້ວຍໝາຍສຳຄັນ
ທີ່ຊົງຍອມໃຫ້ມັນເຮັດຕໍ່ໜ້າສັດຮ້າຍໂຕເດີມນັ້ນ ແລະມັນສັ່ງໃຫ້ເຂົາສ້າງຮູບສັດຮ້າຍທີ່ຖືກຟັນ
ດ້ວຍດາບແຕ່ຍັງບໍ່ຕາຍນັ້ນ. [15]ຊົງຍອມໃຫ້ມັນມີອຳນາດທີ່ຈະໃຫ້ລົມຫັນໃຈແກ່ຮູບສັດນັ້ນເພື່ອ
ຮູບສັດນັ້ນຈະປາກໄດ້ ແລະໃຫ້ມີອຳນາດເຮັດໃຫ້ບັນດາທີ່ບໍ່ຍອມບູຊາຮູບສັດຮ້າຍນັ້ນເຖິງແກ່
ຄວາມຕາຍ. [16]ມັນຍັງເຮັດໃຫ້ຄົນທັງປວງ ທັງນ້ອຍແລະໃຫຍ່, ທັງຮັ່ງມີແລະຍາກຈົນ, ທັງເສລີ
ແລະຂ້ອຍຂ້າ ໄດ້ຮັບເຄື່ອງໝາຍໄວ້ທີ່ມືຂວາຫລືທີ່ໜ້າຜາກຂອງເຂົາ. [17]ເພື່ອບໍ່ໃຫ້ຜູ້ໃດຊື້ຫລື
ຂາຍໄດ້ ເວັ້ນໄວ້ແຕ່ຜູ້ທີ່ມີເຄື່ອງໝາຍນັ້ນ ຊຶ່ງເປັນຊື່ຂອງສັດຮ້າຍຫລືເລກທີ່ໝາຍເຖິງຊື່ມັນນັ້ນ.
[18]ໃນເລື່ອງນີ້ຕ້ອງໃຊ້ສະຕິປັນຍາຄວາມຮູ້ ຖ້າຜູ້ໃດມີຄວາມເຂົ້າໃຈກໍໃຫ້ຄິດເລກຂອງສັດນັ້ນ
ເພາະເປັນເລກຂອງບຸກຄົນຜູ້ໜຶ່ງ ເລກຂອງມັນຄືຫົກຮ້ອຍຫົກສິບຫົກ.

# ບົດທີ 14

## ເພງຂອງຄົນແສນສີ່ໝື່ນສີ່ພັນ

[1]ຂ້າພະເຈົ້າໄດ້ເຫັນແລະດັ່ງນີ້, ພຣະເມສານ້ອຍຊົງຢືນຢູ່ທີ່ພູຊີໂອນ ແລະຜູ້ທີ່ຢູ່ກັບພຣະອົງມີ
ຈຳນວນແສນສີ່ໝື່ນສີ່ພັນຄົນ ຊຶ່ງເປັນຜູ້ທີ່ມີພຣະນາມຂອງພຣະອົງແລະພຣະນາມພຣະບິດາ
ຂອງພຣະອົງຂຽນໄວ້ທີ່ໜ້າຜາກຂອງເຂົາ. [2]ຂ້າພະເຈົ້າໄດ້ຍິນສຽງດັງຈາກສະຫວັນເໝືອນສຽງ
ນ້ຳອັນຫລວງຫລາຍ ແລະເໝືອນສຽງຟ້າຮ້ອງດັງສະໜັ່ນ ສຽງທີ່ຂ້າພະເຈົ້າໄດ້ຍິນນັ້ນກໍເໝືອນ
ສຽງນັກດີດພິນກຳລັງດີດພິນຢູ່. [3]ຄົນເຫລົ່ານັ້ນຮ້ອງເພງບົດໃໝ່ຕໍ່ໜ້າພຣະລາຊະບັນລັງ, ຕໍ່ໜ້າ
ສັດທັງສີ່, ແລະຕໍ່ໜ້າພວກອາວຸໂສ ບໍ່ມີຜູ້ໃດສາມາດຮຽນຮູ້ເພງບົດນັ້ນໄດ້ ເວັ້ນແຕ່ຄົນແສນສີ່
ໝື່ນສີ່ພັນນັ້ນທີ່ໄດ້ຊົງໄຖ່ໄວ້ແລ້ວຈາກແຜ່ນດິນໂລກ.

[4]ຄົນເຫລົ່ານີ້ແຫລະ, ເປັນຜູ້ທີ່ບໍ່ມີຄວາມຊົ່ວມົວໝອງກັບຜູ້ຍິງ ເພາະເຂົາເປັນພວກພົມມະຈາ-
ລີ ພຣະເມສານ້ອຍສະເດັດໄປທາງໃດແມ່ນຄົນເຫລົ່ານີ້ທີ່ຕາມສະເດັດ ຄົນເຫລົ່ານີ້ແຫລະ, ທີ່
ຊົງໄຖ່ໄວ້ຈາກມວນມະນຸດ ເພື່ອເປັນຜົນແຮກຖວາຍແດ່ພຣະເຈົ້າ ແລະແດ່ພຣະເມສານ້ອຍ.
[5]ຈະຫາຄວາມຕົວະໃນປາກຂອງເຂົາບໍ່ພົບ ເຂົາບໍ່ມີຈຸດດ່າງພ້ອຍແລ້ວ.

## ເທວະດາທັງສາມ

[6]ແລ້ວຂ້າພະເຈົ້າໄດ້ເຫັນເທວະດາອີກຕົນໜຶ່ງບິນໄປໃນທ້ອງຟ້າ ມີຂ່າວປະເສີດອັນຕະ-
ຫລອດໄປເປັນນິດເພື່ອນຳໄປປະກາດແກ່ຊາວໂລກທັງປວງ ທຸກປະເທດ, ທຸກກະກຸນ, ທຸກພາ-
ສາ, ແລະທຸກຊາດ. [7]ເທວະດາຕົນນັ້ນໄດ້ຮ້ອງສຽງດັງຂຶ້ນວ່າ, "ຈົ່ງຢຳເກງພຣະເຈົ້າ ແລະຖວາຍ
ພຣະກຽດແດ່ພຣະອົງ ເພາະເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວ ແລະຈົ່ງນະມັດສະການ
ພຣະອົງຜູ້ຊົງສ້າງຟ້າສະຫວັນ, ແຜ່ນດິນໂລກ, ນ້ຳທະເລ, ກັບນ້ຳພຸທັງຫລາຍ.

[8]ແລະເທວະດາອີກຕົນໜຶ່ງເປັນຕົນທີ່ສອງໄດ້ຕາມໄປຮ້ອງຂຶ້ນວ່າ, "ບາບີໂລນມະຫານະຄອນ
ນັ້ນຫລົ້ມຈົມແລ້ວ, ຫລົ້ມຈົມເສຍແລ້ວ ຄືນະຄອນທີ່ເຮັດໃຫ້ປະຊາຊາດທັງປວງດື່ມເຫລົ້າແວງ
ປຸກຢ່າງເຫລືອເກີນຂອງຕົນ ຕາມຄວາມປາດຖະໜາທາງກາມ."

9ມີເທວະດາອີກຕົນໜຶ່ງເປັນຕົນທີ່ສາມ ຕາມໄປຮ້ອງສຽງດັງຂຶ້ນວ່າ, "ຖ້າຜູ້ໃດບູຊາສັດຮ້າຍ
ແລະຮູບຂອງມັນ ແລະຮັບເຄື່ອງໝາຍນັ້ນໄວ້ທີ່ໜ້າຜາກຫລືທີ່ມື. 10ຜູ້ນັ້ນແຫລະ, ຈະຕ້ອງດື່ມ
ເຫລົ້າແວງແຫ່ງພຣະພິໂລດຂອງ ພຣະເຈົ້າ ທີ່ຊົງຖອກລົງໃນຈອກແຫ່ງພຣະພິໂລດນັ້ນໂດຍບໍ່
ປົນກັບສິ່ງໃດ ຜູ້ນັ້ນຈະຕ້ອງຖືກທໍລະມານໃນໄຟກັບມາດຕໍ່ໜ້າຝູງເທວະດາບໍລິສຸດ ແລະຕໍ່
ພຣະພັກພຣະເມສານ້ອຍ. 11ຄວັນແຫ່ງການທໍລະມານຂອງເຂົາກໍພຸ່ງຂຶ້ນຕະຫລອດໄປເປັນນິດ
ຄົນທັງຫລາຍທີ່ບູຊາສັດຮ້າຍແລະຮູບຂອງມັນ ກັບຜູ້ທີ່ຮັບເຄື່ອງໝາຍຊື່ຂອງມັນນັ້ນ ຈະບໍ່ມີເວ-
ລາພັກຜ່ອນທັງກາງເວັນແລະກາງຄືນ." 12ໃນເລື່ອງນີ້ພວກໄພ່ພົນຂອງ ພຣະເຈົ້າ ຄືຜູ້ທີ່ຖືຮັກສາ
ຂໍ້ບັນຍັດຂອງ ພຣະເຈົ້າ ແລະຄວາມເຊື່ອຝ່າຍ ພຣະເຢຊູ ກໍຕ້ອງໃຊ້ຄວາມພຽນອົດທົນ.

13ແລະຂ້າພະເຈົ້າໄດ້ຍິນພຣະສຸລະສຽງຈາກສະຫວັນຊົງສັ່ງວ່າ,

"ຈົ່ງຂຽນໄວ້ວ່າ 'ຄົນທັງຫລາຍທີ່ຕາຍໃນອົງ ພຣະຜູ້ເປັນເຈົ້າ ຕັ້ງແຕ່ນີ້ໄປກໍເປັນສຸກ'"

ແລະ ພຣະວິນຍານ ຊົງຢືນຢັນວ່າ,

"ຈິງຢູ່ແລ້ວ ເພື່ອເຂົາຈະໄດ້ພັກຜ່ອນຈາກການເໜື່ອຍຍາກຂອງຕົນ
ເພາະວ່າການງານທີ່ເຂົາໄດ້ເຮັດນັ້ນກໍຕິດຕາມເຂົາໄປ."

### ການກ່ຽວເກັບຜົນຂອງແຜ່ນດິນໂລກ

14ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້, ມີເມກຂາວ ແລະມີຜູ້ໜຶ່ງປະທັບເທິງເມກນັ້ນເໝືອນກັບບຸດ
ມະນຸດ ພຣະສຽນສວມພວງມາໄລຄຳ ແລະພຣະຫັດຊົງຖືກ່ຽວດວງຄົມ. 15ມີເທວະດາອີກຕົນ
ໜຶ່ງອອກມາຈາກພຣະວິຫານ ຮ້ອງສຽງດັງຂຶ້ນທູນພຣະອົງຜູ້ປະທັບເທິງເມກນັ້ນວ່າ, "ຈົ່ງໃຊ້
ກ່ຽວຂອງພຣະອົງກ່ຽວໄປເທີນ ເພາະເຖິງເວລາກ່ຽວແລ້ວ ດ້ວຍວ່າຜົນທີ່ຈະຕ້ອງເກັບກ່ຽວໃນ
ແຜ່ນດິນໂລກກໍສຸກແລ້ວ." 16ພຣະອົງຜູ້ຊົງປະທັບເທິງເມກນັ້ນໄດ້ຊົງໃຊ້ກ່ຽວນັ້ນເທິງແຜ່ນດິນ
ໂລກ ແຜ່ນດິນໂລກຈຶ່ງໄດ້ຖືກກ່ຽວແລ້ວ.

17ມີເທວະດາອີກຕົນໜຶ່ງອອກມາຈາກພຣະວິຫານໃນສະຫວັນ ຖືກ່ຽວດວງຄົມເໝືອນກັນ.
18ແລະມີເທວະດາອີກຕົນໜຶ່ງຜູ້ມີອຳນາດເໜືອໄຟ ໄດ້ອອກມາຈາກແທ່ນບູຊາຮ້ອງບອກຜູ້ຖື
ກ່ຽວດວງຄົມດ້ວຍສຽງດັງວ່າ, "ຈົ່ງໃຊ້ກ່ຽວດວງຄົມຂອງທ່ານກ່ຽວພວງໝາກອະງຸ່ນແຫ່ງແຜ່ນດິນ
ໂລກ ເພາະໝາກອະງຸ່ນນັ້ນສຸກແລ້ວ." 19ເທວະດາຕົນນັ້ນຈຶ່ງໃຊ້ກ່ຽວຂອງຕົນໄປເທິງແຜ່ນດິນ
ໂລກ ເກັບກ່ຽວຜົນເຄືອອະງຸ່ນຂອງແຜ່ນດິນໂລກ ແລ້ວກໍຖິ້ມລົງໃນອ່າງໃຫຍ່ຢຽບໝາກອະງຸ່ນ
ແຫ່ງພຣະພິໂລດຂອງ ພຣະເຈົ້າ. 20ອ່າງທີ່ເຂົາຢຽບນັ້ນຕັ້ງຢູ່ນອກເມືອງ ເລືອດຈຶ່ງໄຫລອອກ
ຈາກອ່າງນັ້ນສູງພຽງບັງຫຽນມ້າ ໄຫລນອງໄປປະມານແສນຫົກໝື່ນວາ.

## ບົດທີ 15

### ເທວະດາແລະໄພອັນຕະລາຍປະການສຸດທ້າຍ

1ຂ້າພະເຈົ້າໄດ້ເຫັນໝາຍສຳຄັນອັນໃຫຍ່ຫລວງແລະໜ້າອັດສະຈັນໃນສະຫວັນອີກປະການ
ໜຶ່ງ ຄືມີເທວະດາເຈັດຕົນຖືໄພອັນຕະລາຍເຈັດຢ່າງ ເປັນໄພອັນຕະລາຍຄັ້ງສຸດທ້າຍເພາະວ່າ
ພຣະພິໂລດຂອງ ພຣະເຈົ້າ ກໍຄົບຖ້ວນລົງດ້ວຍໄພອັນຕະລາຍເຫລົ່ານັ້ນ.

[2]ຂ້າພະເຈົ້າໄດ້ເຫັນເປັນເໝືອນທະເລແກ້ວປົນໄຟ ແລະໄດ້ເຫັນບັນດາຄົນທີ່ຊະນະສັດຮ້າຍ
ແລະຮູບຂອງມັນ ກັບເລກໝາຍຊື່ຂອງມັນ ຢືນຢູ່ແຄມທະເລແກ້ວນັ້ນ ເຂົາຖືພິນທີ່ພຣະເຈົ້າຊົງ
ປະທານ. [3]ເຂົາຮ້ອງເພງຂອງ ໂມເຊ ຂ້ອຍໃຊ້ຂອງ ພຣະເຈົ້າ ແລະເພງຂອງພຣະເມສານ້ອຍນັ້ນ
ວ່າ,

"ຂ້າແດ່ພຣະເຈົ້າຜູ້ຊົງລິດທານຸພາບອັນສູງສຸດ
ພຣະລາຊະກິດຂອງພຣະອົງກໍໃຫຍ່ຫລວງແລະໜ້າອັດສະຈັນ
ຂ້າແດ່ອົງພຣະມະຫາກະສັດແຫ່ງປະຊາຊາດທັງປວງ[ກ]
ວິຖີທາງຂອງພຣະອົງກໍຍຸດຕິທຳແລະທ່ຽງຈິງ.
[4] ຂ້າແດ່ອົງ ພຣະຜູ້ເປັນເຈົ້າ ໃຜໜໍຈະບໍ່ຢຳເກງພຣະອົງ
ແລະຈະບໍ່ຖວາຍພຣະກຽດແດ່ພຣະນາມຂອງພຣະອົງ
ເພາະວ່າພຣະອົງຜູ້ດຽວຊົງເປັນຜູ້ບໍລິສຸດ
ປະຊາຊາດທັງປວງຈະມານະມັດສະການຕໍ່ພຣະພັກພຣະອົງ
ເພາະກິດຈະການອັນຍຸດຕິທຳຂອງພຣະອົງກໍປະກົດແຈ້ງແລ້ວ.

[5]ຫລັງຈາກນີ້ຂ້າພະເຈົ້າໄດ້ເຫັນພຣະວິຫານໃນສະຫວັນ ຄືສຳນັກຜ້າແຫ່ງຄຳພະຍານໄຂ
ອອກ. [6]ເທວະດາເຈັດຕົນທີ່ຖືໄພອັນຕະລາຍທັງເຈັດໄດ້ອອກມາຈາກພຣະວິຫານນັ້ນ ນຸ່ງຫົ່ມຜ້າ
ປ່ານເນື້ອລະອຽດເສາະໃສ ແລະມີສາຍຮັດຄຳຮັດທີ່ໜ້າເອິກ. [7]ສັດຕົວໜຶ່ງໃນສີ່ຕົວນັ້ນ ໄດ້ເອົາ
ຂັນຄຳເຈັດໜ່ວຍທີ່ເຕັມໄປດ້ວຍພຣະພິໂລດຂອງ ພຣະເຈົ້າ ຜູ້ຊົງພຣະຊົນຢູ່ສືບໆ ໄປເປັນນິດ
ຍື່ນໃຫ້ແກ່ເທວະດາທັງເຈັດຕົນນັ້ນ. [8]ແລ້ວພຣະວິຫານກໍເຕັມໄປດ້ວຍຄວັນທີ່ມາຈາກພຣະລັດ-
ສະໝີຂອງ ພຣະເຈົ້າ ແລະຈາກລິດທານຸພາບຂອງພຣະອົງ ບໍ່ມີຜູ້ໃດສາມາດເຂົ້າໄປໃນພຣະວິ-
ຫານນັ້ນໄດ້ຈົນກວ່າໄພອັນຕະລາຍທັງເຈັດຂອງເທວະດາເຈັດຕົນນັ້ນຈະໄດ້ສິ້ນສຸດລົງ.

# ບົດທີ 16

## ຂັນແຫ່ງພຣະພິໂລດ

[1]ແລ້ວຂ້າພະເຈົ້າໄດ້ຍິນສຽງດັງອອກມາຈາກພຣະວິຫານ ສັ່ງເທວະດາເຈັດຕົນນັ້ນວ່າ, "ຈົ່ງ
ໄປເສຍ ເອົາຂັນທັງເຈັດໜ່ວຍທີ່ເຕັມໄປດ້ວຍພຣະພິໂລດຂອງ ພຣະເຈົ້າ ຖອກລົງເທິງແຜ່ນດິນ
ໂລກ." [2]ເທວະດາຕົນແຮກຈຶ່ງອອກໄປເອົາຂັນຂອງຕົນຖອກລົງເທິງແຜ່ນດິນໂລກ ແລະຄົນ
ທັງຫລາຍທີ່ມີເຄື່ອງໝາຍຂອງສັດຮ້າຍ ແລະບູຊາຮູບຂອງມັນ ຈຶ່ງເກີດເປັນຝີຮ້າຍແຮງແລະ
ເຈັບປວດ.

[3]ເທວະດາຕົນທີ່ສອງໄດ້ຖອກຂັນຂອງຕົນລົງໃສ່ທະເລ ແລ້ວນ້ຳທະເລກໍກາຍເປັນເລືອດ
ເໝືອນເລືອດຂອງຄົນຕາຍ ແລະບັນດາສິ່ງທີ່ມີຊີວິດຢູ່ໃນທະເລນັ້ນກໍຕາຍໝົດ.

[4]ເທວະດາຕົນທີ່ສາມໄດ້ຖອກຂັນຂອງຕົນໃສ່ແມ່ນ້ຳແລະນ້ຳພຸທັງຫລາຍ ນ້ຳເຫລົ່ານັ້ນກໍ
ກາຍເປັນເລືອດ. [5]ແລ້ວຂ້າພະເຈົ້າໄດ້ຍິນເທວະດາແຫ່ງນ້ຳນັ້ນຮ້ອງວ່າ,

---
[ກ]ສຳເນົາກົກບາງສະບັບມີຂໍ້ຄວາມວ່າ "ແຫ່ງຊົ່ວອາຍຸທັງປວງ."

“ຂ້າແດ່ພຣະອົງຜູ້ບໍລິສຸດ
ຜູ້ຊົງດຳລົງຢູ່ບັດນີ້ ແລະຜູ້ຊົງດຳລົງຢູ່ໃນຄາວກ່ອນ
ພຣະອົງຊົງເປັນຜູ້ຍຸດຕິທຳ
ເພາະພຣະອົງຊົງພິພາກສາເຫດການເຫລົ່ານີ້.
6 ເພາະຄົນເຫລົ່ານັ້ນໄດ້ເຮັດໃຫ້ເລືອດໄພ່ພົນຂອງ ພຣະເຈົ້າ
ແລະຂອງພວກຜູ້ປະກາດພຣະທຳໄຫລອອກ
ແລະພຣະອົງໄດ້ຊົງປະທານເລືອດໃຫ້ເຂົາດື່ມ
ກໍສົມຄວນກັບການກະທຳຂອງເຂົາແລ້ວ.”

7 ແລ້ວຂ້າພະເຈົ້າໄດ້ຍິນແທ່ນບູຊາຮ້ອງວ່າ, “ຈິງຢູ່ແລ້ວ ອົງ ພຣະຜູ້ເປັນເຈົ້າ ຜູ້ຊົງລິດທານຸ-
ພາບສູງສຸດການພິພາກສາຂອງພຣະອົງກໍທ່ຽງຈິງແລະຍຸດຕິທຳ.”

8 ເທວະດາຕົນທີ່ສີ່ໄດ້ຖອກຂັນຂອງຕົນລົງໃສ່ດວງອາທິດ ດວງອາທິດຈຶ່ງໄດ້ຮັບພຣະລາຊະ-
ທານອຳນາດລວກມະນຸດດ້ວຍໄຟ. 9 ມະນຸດທັງຫລາຍຈຶ່ງຖືກລວກດ້ວຍຄວາມຮ້ອນອັນແຮງກ້າ
ແລະເຂົາໄດ້ປ້ອຍດ່າພຣະນາມຂອງ ພຣະເຈົ້າ ຜູ້ຊົງມີອຳນາດເໜືອໄພອັນຕະລາຍເຫລົ່ານັ້ນ
ແລະເຂົາບໍ່ໄດ້ຖິ້ມໃຈເກົ່າເອົາໃຈໃໝ່ຖວາຍພຣະກຽດແດ່ພຣະອົງ.

10 ເທວະດາຕົນທີ່ຫ້າໄດ້ຖອກຂັນຂອງຕົນໃສ່ບັນລັງຂອງສັດຮ້າຍ ແລະອານາຈັກຂອງມັນກໍ
ມືດໄປ ຄົນເຫລົ່ານັ້ນໄດ້ຂົບຄຽ້ວລີ້ນຂອງຕົນດ້ວຍຄວາມເຈັບປວດ. 11 ເຂົາໄດ້ປ້ອຍດ່າ ພຣະເຈົ້າ
ແຫ່ງສະຫວັນ ເພາະຄວາມເຈັບປວດແລະເພາະຝີທີ່ເກີດຕາມຕົວ ແຕ່ເຂົາບໍ່ໄດ້ກັບໃຈເສຍໃໝ່
ຈາກກິດຈະການຂອງຕົນ.

12 ເທວະດາຕົນທີ່ຫົກໄດ້ຖອກຂັນຂອງຕົນລົງໃສ່ແມ່ນ້ຳໃຫຍ່ ຄືແມ່ນ້ຳ ເອຟຣາດ ນ້ຳໃນແມ່-
ນ້ຳນັ້ນຈຶ່ງແຫ້ງໄປ ເພື່ອຈັດແຈງທາງໄວ້ສຳລັບກະສັດທັງຫລາຍທີ່ມາຈາກທິດຕາເວັນອອກ.
13 ແລະຂ້າພະເຈົ້າໄດ້ເຫັນຜີຖ່ອຍຮ້າຍສາມໂຕເໝືອນກົບອອກມາຈາກປາກພະຍານາກ, ຈາກ
ປາກສັດຮ້າຍ, ແລະຈາກປາກຜູ້ປະກາດພຣະທຳປອມ. 14 ດ້ວຍວ່າຜີເຫລົ່ານັ້ນເປັນຜີທີ່ເຮັດໝາຍ
ສຳຄັນ ມັນອອກໄປຫາກະສັດທັງຫລາຍທົ່ວພິພົບ ເພື່ອໃຫ້ກະສັດເຫລົ່ານັ້ນມາຮ່ວມກັນສຳລັບ
ການສົງຄາມໃນວັນອັນໃຫຍ່ຫລວງຂອງ ພຣະເຈົ້າ ຜູ້ຊົງລິດທານຸພາບສູງສຸດ. 15 (“ເບິ່ງແມ,
ເຮົາຈະມາເໝືອນຂະໂມຍ ຄວາມສຸກຈະມີແກ່ຜູ້ທີ່ເຝົ້າລະວັງ ແລະແກ່ຜູ້ທີ່ຮັກສາເສື້ອຜ້າຂອງ
ຕົນບໍ່ໃຫ້ຕົວເປືອຍກາຍ ຢ້ານວ່າຄົນທັງຫລາຍຈະເຫັນຄວາມລະອາຍຂອງຕົນ.”)

16 ແລະຜີທັງສາມໂຕນັ້ນໄດ້ໃຫ້ກະສັດທັງຫລາຍມາຊຸມນຸມກັນໃນບ່ອນໜຶ່ງ ຕາມພາສາເຮັບ-
ເຣີເອີ້ນວ່າ ອາມາເຄໂດນ.

17 ເທວະດາຕົນທີ່ເຈັດໄດ້ຖອກຂັນຂອງຕົນລົງໃສ່ອາກາດ ແລະມີພຣະສຸລະສຽງດັງອອກມາ
ຈາກພຣະລາຊະບັນລັງໃນພຣະວິຫານນັ້ນວ່າ, “ສຳເລັດແລ້ວ.” 18 ແລະເກີດມີຟ້າແມບ, ມີສຽງ
ດັງຕ່າງໆ, ມີຟ້າຮ້ອງ, ແລະເກີດມີແຜ່ນດິນໄຫວອັນໃຫຍ່ ຊຶ່ງຕັ້ງແຕ່ມີມະນຸດເກີດມາໃນໂລກ
ບໍ່ເຄີຍມີແຜ່ນດິນໄຫວອັນໃຫຍ່ແລະຮ້າຍປານນີ້ຈັກເທື່ອ. 19 ມະຫານະຄອນນັ້ນກໍແຍກອອກເປັນ
ສາມສ່ວນ ແລະຫົວເມືອງທັງປວງຂອງນານາປະເທດກໍຫລົ້ມຈົມ ພຣະເຈົ້າບໍ່ໄດ້ຊົງລືມມະຫາ

ນະຄອນ ບາບີໂລນ ແຕ່ໄດ້ຊົງໃຫ້ນະຄອນນັ້ນດື່ມຈອກເຫລົ້າແວງແຫ່ງພຣະພິໂລດຂອງພຣະ-
ອົງ. [20]ເກາະທຸກເກາະກໍເຄື່ອນໜີໄປແລະຈະຊອກຫາພູທັງຫລາຍກໍບໍ່ພົບ. [21]ມີໝາກເຫັບໃຫຍ່
ກ້ອນລະຫ້າສິບກິໂລການ ຕົກລົງມາຈາກຟ້າຖືກຄົນທັງປວງ ເຂົາຈຶ່ງປ້ອຍດ່າພຣະເຈົ້າ ເພາະໄພ
ອັນຕະລາຍທີ່ເກີດມາຈາກໝາກເຫັບນັ້ນ ດ້ວຍວ່າໄພອັນຕະລາຍນັ້ນຮ້າຍແຮງເຫລືອເກີນ.

# ບົດທີ 17

## ການພິພາກສາລົງໂທດຍິງໂສເພນີຄົນສຳຄັນ

[1]ເທວະດາຕົນໜຶ່ງໃນເຈັດຕົນທີ່ຖືຂັນທັງເຈັດໜ່ວຍນັ້ນ ໄດ້ມາຫາຂ້າພະເຈົ້າ ແລະ ເວົ້າວ່າ,
"ເຊີນມານີ້ເທີນ ເຮົາຈະໃຫ້ທ່ານໄດ້ເຫັນການຊົງພິພາກສາລົງໂທດຍິງໂສເພນີຄົນສຳຄັນ ທີ່ນັ່ງຢູ່
ເທິງແມ່ນ້ຳອັນຫລວງຫລາຍ. [2]ຄືຍິງນັ້ນທີ່ບັນດາກະສັດທົ່ວໂລກໄດ້ຫລິ້ນຜິດຊາຍຍິງກັບມັນ
ແລະຊາວໂລກທັງຫລາຍໄດ້ມົວເມົາ ດ້ວຍເຫລົ້າແວງແຫ່ງການຜິດຊາຍຍິງຂອງມັນນັ້ນ." [3]ເທ-
ວະດາຕົນນັ້ນໄດ້ຍົກຂ້າພະເຈົ້າເຂົ້າໄປໃນປ່າໂດຍ ພຣະວິນຍານ ແລະຂ້າພະເຈົ້າໄດ້ເຫັນຜູ້ຍິງ
ຄົນໜຶ່ງ ນັ່ງຢູ່ເທິງຫລັງສັດຮ້າຍສີແດງເຂັ້ມໂຕໜຶ່ງ ຊຶ່ງມີຊື່ຫລາຍຊື່ເປັນຄຳໝິ່ນປະໝາດເຕັມໄປ
ທັງໂຕມັນມີເຈັດຫົວແລະສິບເຂົາ. [4]ຍິງນັ້ນນຸ່ງເຄື່ອງສີມ່ວງອ່ອນແລະສີແດງເຂັ້ມ ປະດັບປະດາ
ດ້ວຍເຄື່ອງຄຳ, ດ້ວຍເພັດພອຍຕ່າງໆ ແລະໄຂ່ມຸກ ມືຂອງຍິງນັ້ນຖືຈອກຄຳທີ່ເຕັມດ້ວຍຂອງ
ໜ້າກຽດໜ້າຊັງ ແລະຂອງຂີ້ດຽດແຫ່ງການຜິດຊາຍຍິງຂອງຕົນ. [5]ທີ່ໜ້າຜາກມີຊື່ຂຽນໄວ້ເປັນ-
ຄວາມເລິກລັບວ່າ, "ບາບີໂລນມະຫານະຄອນ, ແມ່ຂອງຍິງໂສເພນີທັງຫລາຍ ແລະແມ່ຂອງສິ່ງ
ທັງປວງທີ່ໜ້າກຽດໜ້າຊັງໃນແຜ່ນດິນໂລກ." [6]ແລະຂ້າພະເຈົ້າໄດ້ເຫັນວ່າຍິງນັ້ນເມົາດ້ວຍເລືອດ
ຂອງໄພ່ພົນຂອງ ພຣະເຈົ້າ ແລະດ້ວຍເລືອດຂອງບັນດາຜູ້ທີ່ຍອມສະຫລະຊີວິດເພາະເປັນພະ-
ຍານຝ່າຍ ພຣະເຢຊູ ເມື່ອຂ້າພະເຈົ້າເຫັນຍິງນັ້ນ ແລ້ວກໍອັດສະຈັນໃຈຫລາຍ. [7]ເທວະດາຕົນນັ້ນ
ຈຶ່ງຖາມຂ້າພະເຈົ້າວ່າ, "ເປັນຫຍັງທ່ານຈຶ່ງອັດສະຈັນໃຈ ເຮົາຈະບອກໃຫ້ທ່ານຮູ້ຄວາມໝາຍຂໍ້
ລັບເລິກຂອງຍິງນັ້ນ ແລະຂອງສັດຮ້າຍທີ່ມີເຈັດຫົວແລະສິບເຂົາ ຊຶ່ງເປັນພາຫະນະຂອງຍິງນັ້ນ.
[8]ສັດຮ້າຍທີ່ທ່ານໄດ້ເຫັນນັ້ນໄດ້ເປັນຢູ່ໃນຄາວກ່ອນ ແຕ່ບັດນີ້ບໍ່ໄດ້ເປັນຢູ່ ມັນຈວນຈະຂຶ້ນມາ
ຈາກເຫວເລິກເພື່ອໄປສູ່ຄວາມຈິບຫາຍ ບັນດາຊາວໂລກທີ່ບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດຕັ້ງ-
ແຕ່ເລີ່ມຕົ້ນຊົງສ້າງໂລກນັ້ນ ກໍຈະປະຫລາດໃຈເມື່ອເຂົາເຫັນສັດຮ້າຍທີ່ໄດ້ເປັນຢູ່ໃນຄາວກ່ອນ
ແຕ່ບັດນີ້ບໍ່ໄດ້ເປັນຢູ່ ແລະຈວນຈະປະກົດມາອີກ. [9]ໃນເລື່ອງນີ້ແຫລະ, ຕ້ອງໃຊ້ຈິດໃຈທີ່ມີສະຕິ-
ປັນຍາ ຫົວທັງເຈັດນັ້ນໄດ້ແກ່ພູນ້ອຍເຈັດໜ່ວຍທີ່ຍິງນັ້ນນັ່ງຢູ່ ຄືໄດ້ແກ່ກະສັດເຈັດອົງ. [10]ຊຶ່ງຫ້າ
ອົງໄດ້ຊົງລ່ວງໄປແລ້ວ, ອົງໜຶ່ງກຳລັງຊົງເປັນຢູ່, ແລະອີກອົງໜຶ່ງຍັງບໍ່ໄດ້ສະເດັດມາ ເມື່ອສະ-
ເດັດມາແລ້ວຈະຕ້ອງດຳລົງຢູ່ຊົ່ວຂະນະໜຶ່ງ. [11]ສັດຮ້າຍທີ່ໄດ້ເປັນຢູ່ໃນຄາວກ່ອນ ແຕ່ບັດນີ້ບໍ່ໄດ້
ເປັນຢູ່ນັ້ນ ກໍເປັນອົງຖ້ວນແປດ ແຕ່ຍັງເປັນອົງໜຶ່ງໃນເຈັດອົງນັ້ນແລະຈະໄປສູ່ຄວາມຈິບຫາຍ.
[12]ເຂົາທັງສິບທີ່ທ່ານໄດ້ເຫັນນັ້ນ ໄດ້ແກ່ກະສັດສິບອົງທີ່ຍັງບໍ່ໄດ້ສະເຫວີຍລາຊະສົມບັດແຕ່ຈະ
ໄດ້ຮັບອຳນາດເໜືອກະສັດດ້ວຍກັນກັບສັດຮ້າຍນັ້ນໜຶ່ງຊົ່ວໂມງ. [13]ກະສັດເຫລົ່ານັ້ນມີນ້ຳພຣະ-
ໄທຢ່າງດຽວກັນແລະຊົງມອບລິດແລະອຳນາດຂອງຕົນໃຫ້ແກ່ສັດຮ້າຍນັ້ນ. [14]ກະສັດທັງຫລາຍ

ນັ້ນຈະສູ້ຮົບກັບພຣະເມສານ້ອຍ ແລະພຣະເມສານ້ອຍຈະມີໄຊຊະນະ ເພາະວ່າພຣະອົງເປັນ
ຈອມເຈົ້ານາຍທັງຫລາຍແລະເປັນຈອມເຈົ້າ ນາຍກະສັດທັງຫລາຍ ຝ່າຍບັນດາຄົນທີ່ຢູ່ກັບ
ພຣະອົງ ເປັນຜູ້ທີ່ພຣະອົງໄດ້ຊົງເອີ້ນເອົາ, ແລະຊົງເລືອກໄວ້, ກັບທັງເປັນຜູ້ສັດຊື່ ກໍຈະມີໄຊ
ດ້ວຍກັນກັບພຣະອົງ.
[15]ເທວະດາຕົນນັ້ນໄດ້ບອກຂ້າພະເຈົ້າວ່າ, “ແມ່ນ້ຳທັງຫລາຍທີ່ທ່ານໄດ້ເຫັນຍິງໂສເພນີນັ່ງຢູ່
ນັ້ນ ໄດ້ແກ່ຊົນຊາດ, ມວນຊົນ, ປະຊາຊາດ, ແລະພາສາຕ່າງໆ. [16]ເຂົາທັງສິບກັບສັດຮ້າຍທີ່
ທ່ານໄດ້ເຫັນນັ້ນຈະພາກັນກຽດຊັງຍິງໂສເພນີ, ຈະເຮັດໃຫ້ມັນຂາດມິດສະຫາຍແລະເປືອຍກາຍ,
ຈະກັດກິນຊີ້ນແລະຈະເອົາໄຟເຜົາມັນເສຍ. [17]ເພາະວ່າພຣະເຈົ້າໄດ້ຊົງດົນໃຈໃຫ້ເຂົາເຮັດຕາມ
ພຣະປະສົງຂອງພຣະອົງ ໂດຍການຊົງເຮັດໃຫ້ເຂົາມີຄວາມຄິດຢ່າງດຽວກັນ ຈຶ່ງໄດ້ມອບອາ-
ນາຈັກຂອງຕົນໃຫ້ແກ່ສັດຮ້າຍນັ້ນ ຈົນເຖິງຈະສຳເລັດຕາມພຣະທຳຂອງພຣະເຈົ້າ. [18]ສ່ວນຜູ້ຍິງ
ທີ່ທ່ານໄດ້ເຫັນນັ້ນໄດ້ແກ່ມະຫານະຄອນ ທີ່ມີອຳນາດເໜືອກະສັດທັງຫລາຍທົ່ວແຜ່ນດິນໂລກ.”

# ບົດທີ 18

## ນະຄອນບາບີໂລນຫລົ້ມ

[1]ຫລັງຈາກນີ້ຂ້າພະເຈົ້າໄດ້ເຫັນເທວະດາອີກຕົນໜຶ່ງກຳລັງລົງມາຈາກສະຫວັນ ມີອຳນາດອັນ
ໃຫຍ່ຫລວງ ແລະແຜ່ນດິນໂລກໄດ້ສະຫວ່າງຂຶ້ນດ້ວຍລັດສະໝີຂອງຕົນນັ້ນ. [2]ເທວະດານັ້ນໄດ້
ຮ້ອງປະກາດສຽງແຮງກ້າຂຶ້ນວ່າ,

“ບາບີໂລນມະຫານະຄອນຫລົ້ມຈົມແລ້ວ ຫລົ້ມຈົມເສຍແລ້ວ
ມັນກາຍເປັນບ່ອນອາໃສຂອງຜີຮ້າຍ
ເປັນບ່ອນລີ້ຊ້ອນຂອງຜີຖ່ອຍຮ້າຍທຸກຢ່າງ
ແລະເປັນຄອນນົກບໍ່ສະອາດແລະໜ້າກຽດທຸກຊະນິດ.
[3] ເພາະວ່າປະຊາຊາດທັງປວງໄດ້ດື່ມເຫລົ້າແວງປຸກ
ຢ່າງເຫລືອເກີນແຫ່ງການຜິດຊາຍຍິງຂອງນະຄອນນັ້ນ
ບັນດາກະສັດແຫ່ງແຜ່ນດິນໂລກໄດ້ລ່ວງຜິດຊາຍຍິງກັບນະຄອນນັ້ນ
ແລະພໍ່ຄ້າທັງຫລາຍແຫ່ງແຜ່ນດິນໂລກ
ໄດ້ລ້ຳລວຍດ້ວຍຊັບອັນພູມເຟືອຍຂອງນະຄອນນັ້ນ.”

[4]ແລ້ວຂ້າພະເຈົ້າໄດ້ພຣະສຸລະສຽງອີກປະກາດອອກມາຈາກສະຫວັນວ່າ,

“ໄພ່ພົນຂອງເຮົາເອີຍ, ຈົ່ງອອກມາຈາກນະຄອນນັ້ນເສຍ
ເພື່ອເຈົ້າທັງຫລາຍຈະບໍ່ໄດ້ເຂົ້າສ່ວນໃນການຜິດບາບຂອງມັນ
ເພື່ອເຈົ້າຈະບໍ່ຖືກໄພອັນຕະລາຍທີ່ຈະເກີດແກ່ມັນນັ້ນ.
[5] ເພາະວ່າບາບຂອງນະຄອນນັ້ນກອງສູງຂຶ້ນພຽງຟ້າແລ້ວ
ແລະພຣະເຈົ້າໄດ້ຊົງຈົດຈຳການທຸດຈະລິດຂອງມັນໄວ້.
[6] ນະຄອນນັ້ນໄດ້ໃຫ້ຜົນຢ່າງໃດກໍຈົ່ງໃຫ້ຜົນແກ່ມັນຢ່າງນັ້ນ

ແລະຈົ່ງຕອບແທນແກ່ການກະທຳຂອງມັນເປັນສອງທົ່
ໃນຈອກທີ່ມັນໄດ້ປະສົມໄວ້ກໍຈົ່ງປະສົມລົງໃນຈອກນັ້ນສອງທົ່.
7 ນະຄອນນັ້ນໄດ້ອວດຈອງຫອງແລະປ່ອຍຕົວໄປຕາມຄວາມສະໜຸກສະໜານເທົ່າໃດ
ກໍຈົ່ງໃຫ້ມັນໄດ້ຮັບການທໍລະມານແລະຄວາມໂສກເສົ້າຫລາຍເທົ່ານັ້ນ
ເພາະມັນຄຶດໃນໃຈວ່າ 'ເຮົາຢູ່ໃນຕຳແໜ່ງລາຊິນີບໍ່ແມ່ນແມ່ໝ້າຍ
ເຮົາຈະບໍ່ປະສົບຄວາມໂສກເສົ້າຈັກເທື່ອ'.
8 ເຫດສັນນັ້ນໄພອັນຕະລາຍຕ່າງໆ ຂອງນະຄອນນັ້ນ
ຈະເກີດຂຶ້ນໃນວັນດຽວຄືຄວາມຕາຍ, ຄວາມໂສກເສົ້າ, ຄວາມອຶກຢາກ
ແລະໄຟຈະເຜົາມັນໃຫ້ຈິບຫາຍເສຍເພາະວ່າອົງ ພຣະຜູ້ເປັນເຈົ້າ
ຄື ພຣະເຈົ້າຜູ້ຊົງພິພາກສານະຄອນນັ້ນຊົງປະກອບດ້ວຍພຣະກຳລັງ."

9ບັນດາກະສັດແຫ່ງແຜ່ນດິນໂລກທີ່ໄດ້ລ່ວງຜິດຊາຍຍິງກັບນະຄອນນັ້ນ ແລະໄດ້ປ່ອຍຕົວໄປ
ຕາມຄວາມສະໜຸກສະໜານຮ່ວມກັນນັ້ນ ເມື່ອໄດ້ເຫັນຄວັນໄຟທີ່ໄໝ້ມັນກໍຈະຕີອົກຮ້ອງໄຫ້.
10ກະສັດເຫລົ່ານັ້ນຈະຢືນຢູ່ຫ່າງໄກ ເພາະຢ້ານໄພແຫ່ງການທີ່ທໍລະມານຂອງນະຄອນນັ້ນ ແລະ
ຈະກ່າວວ່າ,

"ວິບັດ, ວິບັດແລ້ວບາບີໂລນ ມະຫານະຄອນທີ່ແຂງແຮງເອີຍ,
ເຈົ້າໄດ້ຖືກການພິພາກສາລົງໂທດເສຍ
ພາຍໃນຊົ່ວໂມງດຽວເທົ່ານັ້ນ."

11ບັນດາພໍ່ຄ້າແຫ່ງແຜ່ນດິນໂລກຈະຮ້ອງໄຫ້ແລະໂສກເສົ້າເພາະນະຄອນນັ້ນ ດ້ວຍວ່າບໍ່ມີໃຜ
ຊື້ສິນຄ້າທີ່ເຂົາບັນທຸກມານັ້ນ. 12ສິນຄ້າເຫລົ່ານັ້ນຄືຄຳ, ເງິນ, ເພັດພອຍຕ່າງໆ, ໄຂ່ມຸກ, ຜ້າ
ປ່ານເນື້ອລະອຽດ, ຜ້າສີມ່ວງອ່ອນ, ຜ້າໄໝ, ຜ້າສີແດງເຂັ້ມ, ໄມ້ຫອມທຸກຊະນິດ, ເຄື່ອງໃຊ້
ທຸກຊະນິດທີ່ເຮັດດ້ວຍງາ, ດ້ວຍໄມ້ອັນມີຄ່າ, ດ້ວຍທອງເຫລືອງ, ດ້ວຍເຫລັກ, ແລະດ້ວຍຫີນ
ລາຍ. 13ແຄ, ເຄື່ອງຫອມ, ກຳຍານ, ນ້ຳມັນຫອມ, ເຄື່ອງຫອມເຜົາບູຊາ, ເຫລົ້າແວງ, ນ້ຳມັນ,
ເຂົ້າແປ້ງລະອຽດ, ເຂົ້າບາເລ, ງົວ, ແກະ, ມ້າ, ລົດ, ຂ້ອຍຂ້າ, ແລະຊີວິດຈິດໃຈມະນຸດ.

14 "ຜົນຊຶ່ງຈິດໃຈຂອງເຈົ້າປາດຖະໜາຢາກໄດ້ນັ້ນ
ກໍລ່ວງພົ້ນໄປຈາກເຈົ້າແລ້ວ
ສິ່ງສາລະພັດອັນປານີດວິເສດແລະງົດງາມເຫລື້ອມໃສ
ກໍສູນເສຍໄປຈາກເຈົ້າແລ້ວ
ເຈົ້າຈະບໍ່ໄດ້ພົບສິ່ງເຫລົ່ານີ້ອີກຈັກເທື່ອ."

15ບັນດາພໍ່ຄ້າທີ່ຂາຍສິ່ງຂອງເຫລົ່ານີ້ ຈົນເປັນຄົນຮັ່ງມີເພາະນະຄອນນັ້ນ ຈະຢືນຢູ່ຫ່າງໄກ
ເພາະຢ້ານໄພແຫ່ງການທໍລະມານຂອງມັນ ເຂົາຈະຮ້ອງໄຫ້ແລະໂສກເສົ້າດ້ວຍສຽງດັງ. 16ວ່າ,

"ວິບັດ, ວິບັດແລ້ວ ມະຫານະຄອນນັ້ນ
ທີ່ເຄີຍນຸ່ງຫົ່ມຜ້າປ່ານເນື້ອລະອຽດ, ຜ້າສີມ່ວງອ່ອນ, ຜ້າສີແດງເຂັ້ມ
ທີ່ເຄີຍປະດັບຕົວດ້ວຍຄຳ, ດ້ວຍເພັດພອຍຕ່າງໆແລະໄຂມຸກນັ້ນ.

17 ພຽງແຕ່ໃນຊົ່ວໂມງດຽວຊັບສົມບັດເຫລົ່ານັ້ນ
ໄດ້ຖືກຊົງທຳລາຍເສຍໄປໝົດ”
ນາຍສະເພົາທຸກຄົນແລະຄົນໂດຍສານ,
ບັນດາລູກເຮືອແລະຄົນທັງປວງທີ່ມີອາຊີບທາງທະເລ
ກໍຢືນຫ່າງໄກ.
18ເມື່ອຄົນເຫລົ່ານັ້ນໄດ້ເຫັນຄວັນໄຟທີ່ໄໝ້ນະຄອນນັ້ນກໍຮ້ອງວ່າ, “ນະຄອນໃດໜໍ ຈະເປັນ
ເໝືອນມະຫານະຄອນນີ້.” 19ເຂົາໄດ້ເອົາຂີ້ຝຸ່ນດິນໃສ່ຫົວຂອງຕົນ ພ້ອມຮ້ອງໄຫ້ແລະໂສກເສົ້າ
ເອີ່ຍຂຶ້ນວ່າ,
“ວິບັດ, ວິບັດແລ້ວ ມະຫານະຄອນນີ້
ຊຶ່ງໄດ້ເຮັດໃຫ້ຄົນທັງປວງທີ່ມີສະເພົາເດີນທະເລ
ເປັນຄົນຮັ່ງມີດ້ວຍຊັບສົມບັດຂອງມັນ
ພາຍໃນຊົ່ວໂມງດຽວກໍຖືກທຳລາຍເສຍໄປໝົດ.”
20 “ໂອ ຟ້າສະຫວັນແລະບັນດາໄພ່ພົນຂອງພຣະເຈົ້າ
ໂອ ອັກຄະສາວົກແລະຜູ້ປະກາດພຣະທຳທັງຫລາຍເອີຍ
ຈົ່ງຊົມຊື່ນຍິນດີເພາະນະຄອນນັ້ນ
ດ້ວຍວ່າພຣະເຈົ້າໄດ້ຊົງພິພາກສາລົງໂທດນະຄອນນັ້ນ
ເພື່ອເປັນການແກ້ແຄ້ນໃຫ້ທ່ານທັງຫລາຍແລ້ວ.”
21ແລ້ວມີເທວະດາຜູ້ມີລິດຕົນໜຶ່ງ ໄດ້ຍົກຫີນກ້ອນໜຶ່ງເໝືອນຫີນໂມ້ໃຫຍ່ ຖິ້ມລົງໃນທະເລ
ກ່າວວ່າ,
“ບາບີໂລນມະຫານຄອນນັ້ນຈະຖືກຖິ້ມລົງ
ໂດຍຮຸນແຮງຢ່າງນີ້ແຫລະ
ແລ້ວຈະບໍ່ມີໃຜເຫັນມັນຕໍ່ໄປອີກຈັກເທື່ອ.
22 ສຽງນັກດີດພິນ, ນັກເສບ, ນັກເປົ່າຂຸ່ຍ, ແລະເປົ່າແກ
ຈະບໍ່ໄດ້ຍິນໃນເຈົ້າຕໍ່ໄປອີກ
ຈະບໍ່ພົບຄົນທີ່ມີວິຊາຊ່າງຢ່າງໃດຈັກຄົນໃນເຈົ້າຕໍ່ໄປອີກ
ແລະສຽງໂມ້ແປ້ງຈະບໍ່ໄດ້ຍິນໃນເຈົ້າຕໍ່ໄປອີກຈັກເທື່ອ.
23 ຈະບໍ່ມີແສງໂຄມສ່ອງສະຫວ່າງໃນເຈົ້າຕໍ່ໄປອີກ
ຈະບໍ່ມີໃຜໄດ້ຍິນສຽງເຈົ້າບ່າວເຈົ້າສາວໃນເຈົ້າຕໍ່ໄປຈັກເທື່ອ
ເພາະວ່າບັນດາພໍ່ຄ້າຂອງເຈົ້າໄດ້ເປັນເຈົ້ານາຍແຫ່ງແຜ່ນດິນໂລກ
ແລະບັນດາປະຊາຊາດໄດ້ຖືກຫລອກລວງດ້ວຍເວດມົນຄາຖາຂອງເຈົ້າ.
24 ໃນນະຄອນນັ້ນເຂົາໄດ້ພົບເລືອດຂອງຜູ້ປະກາດພຣະທຳ
ແລະຂອງພວກໄພ່ພົນຂອງພຣະເຈົ້າ
ກັບເລືອດຂອງບັນດາຄົນທີ່ຖືກຂ້າເທິງແຜ່ນດິນໂລກນັ້ນ.”

# ບົດທີ 19

[1]ຫລັງຈາກນັ້ນຂ້າພະເຈົ້າໄດ້ຍິນເໝືອນສຽງດັງຂອງຝູງຄົນຈຳນວນຫລາຍໃນສະຫວັນ ກຳລັງ
ຮ້ອງວ່າ,

"ອາເລລູຢາ
ຄວາມພົ້ນ, ສະຫງ່າລາສີ, ແລະລິດເດດ
ກໍເປັນຂອງພຣະເຈົ້າຂອງເຮົາທັງຫລາຍ.
[2] ເພາະວ່າການພິພາກສາຂອງພຣະອົງທ່ຽງຈິງແລະຍຸດຕິທຳ
ພຣະອົງໄດ້ຊົງພິພາກສາລົງໂທດຍິງໂສເພນີຄົນສຳຄັນນັ້ນ
ທີ່ໄດ້ເຮັດໃຫ້ແຜ່ນດິນໂລກຊົ່ວຮ້າຍໄປດ້ວຍການລ່ວງຜິດຊາຍຍິງຂອງຕົນ
ເພື່ອເປັນການແກ້ແຄ້ນຍິງນັ້ນຍ້ອນເລືອດບັນດາຂ້ອຍໃຊ້ຂອງພຣະອົງ."

[3]ຄົນເຫລົ່ານັ້ນຮ້ອງຂຶ້ນເປັນເທື່ອທີ່ສອງວ່າ, "ອາເລລູຢາຄວັນໄຟທີ່ໄໝ້ນະຄອນນັ້ນກໍພຸ່ງຂຶ້ນ
ຕະຫລອດເປັນນິດ. [4]ແລະພວກຜູ້ອາວຸໂສທັງຊາວສີ່ທ່ານກັບສັດທັງສີ່ນັ້ນ ກໍໄດ້ຂາບລົງນະມັດ-
ສະການພຣະເຈົ້າ ຜູ້ຊົງປະທັບຢູ່ເທິງພຣະລາຊະບັນລັງນັ້ນ ແລະຮ້ອງຂຶ້ນວ່າ, "ອາແມນ, ອາ-
ເລລູຢາ.

[5]ແລະມີສຽງດັງອອກມາຈາກພຣະລາຊະບັນລັງວ່າ,

"ເຈົ້າທັງຫລາຍ ຜູ້ເປັນຂ້ອຍຂ້າຂອງພຣະອົງ ທີ່ຢຳເກງພຣະອົງ
ທັງຜູ້ໃຫຍ່ແລະຜູ້ນ້ອຍ ຈົ່ງຖວາຍສັນລະເສີນແດ່ພຣະເຈົ້າຂອງເຮົາທັງຫລາຍ.

## ງານລ້ຽງມຸງຄຸນສົມລົດຂອງພຣະເມສານ້ອຍ

[6]ແລ້ວຂ້າພະເຈົ້າໄດ້ຍິນເໝືອນສຽງຄົນຈຳນວນຫລວງຫລາຍ, ເໝືອນສຽງນ້ຳຫລາຍ ແລະ
ເໝືອນຟ້າຮ້ອງສຽງແຮງກ້າວ່າ,

"ອາເລລູຢາ
ເພາະວ່າອົງພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງພວກເຮົາ ຜູ້ຊົງລິດທານຸພາບອັນສູງສຸດ
ໄດ້ຊົງຂຶ້ນສະເຫວີຍລາດແລ້ວ.
[7] ໃຫ້ເຮົາທັງຫລາຍຊົມຊື່ນແລະປິຕິຍິນດີ
ພາກັນຖວາຍພຣະກຽດແດ່ພຣະອົງ
ເພາະເຖິງເວລາມຸງຄຸນສົມລົດຂອງພຣະເມສານ້ອຍແລ້ວ
ແລະເຈົ້າສາວຂອງພຣະອົງໄດ້ຕຽມພ້ອມແລ້ວ.
[8] ແລະຊົງໂຜດໃຫ້ເຈົ້າສາວນັ້ນ
ນຸ່ງຫົ່ມຜ້າປ່ານເນື້ອລະອຽດເສາະໃສແລະບໍລິສຸດ"
(ເພາະຜ້າປ່ານເນື້ອດີນັ້ນໄດ້ແກ່ການປະຕິບັດອັນຊອບທຳ
ແຫ່ງພວກໄພ່ພົນຂອງພຣະເຈົ້າ).

[9]ເທວະດາຕົນນັ້ນໄດ້ບອກຂ້າພະເຈົ້າວ່າ, "ຈົ່ງຂຽນໄວ້ວ່າ ຄວາມສຸກມີແກ່ຄົນທັງຫລາຍທີ່ໄດ້

ຮັບເຊີນມາໃນງານລ້ຽງມຸງຄຸນສົມລົດຂອງພຣະເມສານ້ອຍນັ້ນ’ ແລະເພິ່ນໄດ້ບອກຂ້າພະເຈົ້າ
ວ່າ, “ຖ້ອຍຄຳເຫລົ່ານີ້ເປັນພຣະທຳທ່ຽງແທ້ຂອງ ພຣະເຈົ້າ.” 10ແລ້ວຂ້າພະເຈົ້າໄດ້ກົ້ມຕົວລົງ
ແທບຕີນຂອງເທວະດານັ້ນເພື່ອຈະຂາບໄຫວ້ເພິ່ນ ແຕ່ເພິ່ນໄດ້ກ່າວກັບຂ້າພະເຈົ້າວ່າ, “ລະວັງ
ຢ່າເຮັດຢ່າງນັ້ນ ເຮົາເປັນເພື່ອນຂ້ອຍໃຊ້ຮ່ວມກັນກັບທ່ານ ແລະຮ່ວມກັບພີ່ນ້ອງຂອງທ່ານທີ່ຍຶດ
ຖືຄຳພະຍານຝ່າຍ ພຣະເຢຊູ ຈົ່ງນະມັດສະການ ພຣະເຈົ້າ” ເພາະວ່າເນື້ອຄວາມຂອງການປະ-
ກາດພຣະທຳກໍເປັນຄຳພຣະຍານຝ່າຍ ພຣະເຢຊູ.

## ຜູ້ປະທັບເທິງຫລັງມ້າຂາວ

11ແລ້ວຂ້າພະເຈົ້າໄດ້ເຫັນສະຫວັນໄຂອອກ ແລະດັ່ງນີ້, ມີມ້າຂາວໂຕໜຶ່ງ ພຣະອົງຜູ້ປະທັບ
ເທິງຫລັງມ້ານັ້ນຊົງພຣະນາມວ່າ “ສັດຊື່” ແລະ “ທ່ຽງທຳ” ພຣະອົງຊົງພິພາກສາແລະທຳເສິກ
ດ້ວຍຍຸດຕິທຳ. 12ພຣະເນດຂອງພຣະອົງເໝືອນແປວໄຟເທິງພຣະສຽນຂອງພຣະອົງມີມົງກຸດ
ຫລາຍອັນ ພຣະອົງຊົງມີພຣະນາມຈາລຶກໄວ້ຊຶ່ງບໍ່ມີຜູ້ໃດຮູ້ຈັກ ເວັ້ນໄວ້ແຕ່ພຣະອົງເອງ. 13ເສື້ອ
ຄຸມທີ່ພຣະອົງຊົງຖືນັ້ນກໍຈຸ່ມແລ້ວໃນເລືອດ[ກ] ແລະພຣະນາມຂອງພຣະອົງເອີ້ນວ່າ “ພຣະທຳ
ຂອງ ພຣະເຈົ້າ.” 14ຝູງກອງທັບໃນສະຫວັນນຸ່ງຫົ່ມຜ້າປ່ານເນື້ອລະອຽດຂາວບໍລິສຸດ ຂີ່ມ້າຂາວ
ແຫ່ຕາມສະເດັດໄປ. 15ມີພຣະແສງດວງຄົມອອກມາຈາກພຣະໂອດຂອງພຣະອົງ ເພື່ອພຣະອົງ
ຈະຊົງຟັນບັນດາປະຊາຊາດດ້ວຍພຣະແສງນັ້ນ ພຣະອົງນີ້ແຫລະ, ຈະຊົງຄຸ້ມຄອງເຂົາດ້ວຍ
ຄ້ອນເຫລັກ ພຣະອົງຈະຊົງຢຽບຊຸມຢຽບໝາກອະງຸ່ນແຫ່ງພຣະພິໂລດອັນແຮງກ້າຂອງ ພຣະເຈົ້າ
ຜູ້ຊົງລິດທານຸພາບສູງສຸດ. 16ພຣະອົງຊົງມີພຣະນາມຈາລຶກໄວ້ທີ່ເຄື່ອງທົງ ແລະທີ່ພຣະອຸຣຸຂອງ
ພຣະອົງວ່າ, “ຈອມເຈົ້າກະສັດ” ແລະ “ຈອມເຈົ້ານາຍ.”

17ແລ້ວຂ້າພະເຈົ້າໄດ້ເຫັນເທວະດາຕົນໜຶ່ງຢືນຢູ່ໃນດວງອາທິດ ເພິ່ນປະກາດດ້ວຍສຽງດັງ
ແກ່ນົກທັງປວງທີ່ບິນໄປມາໃນທ້ອງຟ້າວ່າ, “ຈົ່ງມາໂຮມກັນສຳລັບການບິນລ້ຽງອັນໃຫຍ່ຂອງ
ພຣະເຈົ້າ. 18ເພື່ອຈະໄດ້ກິນຊີ້ນກະສັດ, ຊີ້ນນາຍທະຫານ, ຊີ້ນຊາຍສະກັນ, ຊີ້ນມ້າກັບຊີ້ນຄົນ
ທີ່ຂີ່ມ້ານັ້ນ, ແລະຊີ້ນປະຊາຊົນ ທັງເສລີແລະຂ້ອຍຂ້າ ທັງຜູ້ນ້ອຍແລະຜູ້ໃຫຍ່.”

19ແລະຂ້າພະເຈົ້າໄດ້ເຫັນສັດຮ້າຍແລະກະສັດທັງຫລາຍຂອງແຜ່ນດິນໂລກ ພ້ອມທັງກອງ-
ທັບຂອງກະສັດເຫລົ່ານັ້ນມາໂຮມກັນ ເພື່ອຮົບເສິກຕໍ່ສູ້ພຣະອົງຜູ້ປະທັບເທິງຫລັງມ້ານັ້ນ ແລະ
ຕໍ່ສູ້ກອງທັບຂອງພຣະອົງ. 20ສັດຮ້າຍນັ້ນໄດ້ຖືກຈັບພ້ອມດ້ວຍຄົນທີ່ປອມຕົວເປັນຜູ້ປະກາດ
ພຣະທຳ, ທີ່ໄດ້ເຮັດໝາຍສຳຄັນຕໍ່ໜ້າສັດຮ້າຍນັ້ນ ແລະໃຊ້ໝາຍສຳຄັນນັ້ນຫລອກລວງຄົນທັງ-
ຫລາຍທີ່ຮັບເຄື່ອງໝາຍຂອງສັດຮ້າຍແລະບູຊາຮູບຂອງມັນ ເຂົາທັງສອງໄດ້ຖືກຖິ້ມລົງທັງເປັນ
ໃນບຶງໄຟທີ່ໄໝ້ຢູ່ດ້ວຍມາດ. 21ສ່ວນຄົນທີ່ຍັງເຫລືອຢູ່ນັ້ນ ໄດ້ຖືກຂ້າດ້ວຍພຣະແສງທີ່ອອກມາ
ຈາກພຣະໂອດຂອງພຣະອົງ ຜູ້ຊົງປະທັບເທິງຫລັງມ້ານັ້ນ ແລະນົກທັງປວງກໍກິນຊີ້ນຂອງຄົນ
ເຫລົ່ານັ້ນຈົນອີ່ມ.

[ກ]ສຳເນົາກົກບາງສະບັບວ່າ "ຊິດດ້ວຍເລືອດແລ້ວ."

# ບົດທີ 20

## ລະຫວ່າງພັນປີ

1ແລ້ວຂ້າພະເຈົ້າໄດ້ເຫັນເທວະດາຕົນໜຶ່ງລົງມາຈາກສະຫວັນ ເພິ່ນຖືຂໍກະແຈຂອງເຫວເລິກ
ແລະຖືໂສ້ເສັ້ນໃຫຍ່. 2ເພິ່ນໄດ້ຈັບພະຍານາກຊຶ່ງເປັນງູແຕ່ດຶກດຳບັນ ຄືພະຍາມານແລະຊາ-
ຕານ ແລະໄດ້ຜູກມັດມັນໄວ້ລະຫວ່າງພັນປີ. 3ແລ້ວຖິ້ມມັນລົງໃນເຫວເລິກ ແລະລັ່ນກະແຈທັງ
ຕີຕາປະທັບໃສ່ ເພື່ອບໍ່ໃຫ້ມັນຫລອກລວງບັນດາປະຊາຊາດອີກຕໍ່ໄປ ຈົນກວ່າພັນປີນັ້ນລ່ວງໄປ
ແລ້ວ ພາຍຫລັງນັ້ນຈຳເປັນຕ້ອງປ່ອຍມັນອອກໄປຊົ່ວຄາວ.

4ແລ້ວຂ້າພະເຈົ້າໄດ້ເຫັນບັນລັງຫລາຍອັນ ແລະຜູ້ທີ່ນັ່ງເທິງບັນລັງນັ້ນເປັນຜູ້ທີ່ໄດ້ຮັບພຣະ-
ລາຊະທານອຳນາດພິພາກສາ ແລະຂ້າພະເຈົ້າຍັງໄດ້ເຫັນດວງວິນຍານຂອງຄົນທັງປວງທີ່ຖືກ
ຕັດຄໍ ເພາະເປັນພະຍານຝ່າຍ ພຣະເຢຊູ ແລະເພາະພຣະທຳຂອງ ພຣະເຈົ້າ ຄືຜູ້ທີ່ບໍ່ໄດ້ບູຊາສັດ
ຮ້າຍຫລືຮູບຂອງມັນ ແລະບໍ່ໄດ້ຮັບເຄື່ອງໝາຍຂອງມັນຕິດໄວ້ທີ່ໜ້າຜາກຫລືມືຂອງຕົນ ຄົນ
ເຫລົ່ານັ້ນກັບຄືນມີຊີວິດໃໝ່ ແລະໄດ້ຄຸ້ມຄອງຮ່ວມກັບ ພຣະຄຣິດ ໃນລະຫວ່າງພັນປີ. 5(ນອກ-
ຈາກຄົນເຫລົ່ານີ້ຄົນອື່ນໆ ທີ່ຕາຍແລ້ວບໍ່ໄດ້ກັບຄືນມີຊີວິດອີກ ຈົນກວ່າພັນປີນັ້ນລ່ວງໄປແລ້ວ)
ນີ້ແຫລະ, ຄືການຄືນມາຈາກຕາຍຄັ້ງແຮກ. 6ຜູ້ໃດທີ່ມີສ່ວນໃນການຄືນມາຈາກຕາຍຄັ້ງແຮກ ຜູ້
ນັ້ນແຫລະ, ກໍເປັນສຸກແລະບໍລິສຸດ ຄວາມຕາຍທີສອງຈະບໍ່ມີອຳນາດເໜືອຄົນນັ້ນ ແຕ່ເຂົາຈະ
ໄດ້ເປັນປະໂລຫິດຂອງ ພຣະເຈົ້າ ແລະຂອງ ພຣະຄຣິດ ທັງຈະຄຸ້ມຄອງຮ່ວມກັບພຣະອົງໃນລະ-
ຫວ່າງພັນປີ.

7ເມື່ອພັນປີນັ້ນລ່ວງໄປແລ້ວ ຊາຕານ ຈະຖືກປ່ອຍອອກຈາກຄຸກບ່ອນຂັງມັນໄວ້. 8ມັນຈະ
ອອກໄປຫລອກລວງບັນດາປະຊາຊາດ ທີ່ຢູ່ໃນທິດທັງສີ່ຂອງແຜ່ນດິນໂລກ ຄືໂຄກ ແລະ ມາ-
ໂຄກ ໃຫ້ມາໂຮມກັນເພື່ອການຮົບເສິກ ຈຳນວນຄົນເຫລົ່ານັ້ນຫລາຍເໝືອນເມັດຊາຍທີ່ທະເລ.
9ເຂົາໄດ້ຍົກທັບອອກໄປທົ່ວໜ້າແຜ່ນດິນ ແລ້ວອ້ອມຄ້າຍພວກໄພ່ພົນຂອງ ພຣະເຈົ້າ ກັບນະ-
ຄອນທີ່ພຣະອົງຊົງຮັກນັ້ນ ແຕ່ໄຟໄດ້ຕົກລົງມາຈາກສະຫວັນລ້າງຜານຄົນເຫລົ່ານັ້ນເສຍ.
10ສ່ວນພະຍາມານທີ່ຫລອກລວງຄົນເຫລົ່ານັ້ນ ກໍຖືກຖິ້ມລົງໃນບຶງໄຟປົນກັບມາດ ຄືບ່ອນທີ່ສັດ
ຮ້າຍແລະຄົນທີ່ປອມຕົວເປັນຜູ້ປະກາດພຣະທຳຢູ່ໃນນັ້ນ ເຂົາຈະຕ້ອງທົນທຸກທໍລະມານທັງກາງ-
ເວັນແລະກາງຄືນຕະຫລອດໄປເປັນນິດ.

## ພຣະລາຊະບັນລັງໃໝ່ສີຂາວແລະການຊົງພິພາກສາ

11ແລ້ວຂ້າພະເຈົ້າໄດ້ເຫັນພຣະລາຊະບັນລັງໃຫຍ່ສີຂາວ ແລະເຫັນພຣະອົງຜູ້ຊົງປະທັບເທິງ
ບັນລັງນັ້ນ ເມື່ອພຣະອົງຊົງປະກົດ ແຜ່ນດິນໂລກແລະທ້ອງຟ້າກໍຝ່າຍໜີແລະບ່ອນຢູ່ສຳລັບ
ແຜ່ນດິນໂລກແລະທ້ອງຟ້ານັ້ນກໍບໍ່ເຫັນອີກ. 12ຂ້າພະເຈົ້າໄດ້ເຫັນບັນດາຜູ້ທີ່ຕາຍແລ້ວ ທັງຜູ້
ໃຫຍ່ແລະຜູ້ນ້ອຍ ຢືນຢູ່ຕໍ່ໜ້າພຣະລາຊະບັນລັງນັ້ນແລະໜັງສືຕ່າງໆ ກໍໄຂອອກ ມີໜັງສືອີກ
ເຫລັ້ມໜຶ່ງກໍໄຂອອກ ຄືທະບຽນແຫ່ງຊີວິດ ແລະຄົນທັງຫລາຍທີ່ຕາຍແລ້ວກໍຖືກຊົງພິພາກສາ
ຕາມການປະຕິບັດຂອງເຂົາທີ່ຂຽນໄວ້ໃນໜັງສືເຫລົ່ານັ້ນ. 13ທະເລກໍສົ່ງຄົນທັງຫລາຍທີ່ຕາຍໃນ
ທະເລຄືນ ຄວາມຕາຍແລະແດນມໍລະນາກໍສົ່ງຄືນທັງຫລາຍທີ່ຢູ່ໃນແດນນັ້ນຄືນ ເຂົາທັງປວງກໍ

ຖືກຊົງພິພາກສາຕາມການປະຕິບັດຂອງຕົນທຸກຄົນ. 14ຄວາມຕາຍແລະແດນມໍລະນາກໍຖືກຖິ້ມ
ລົງໃນບຶງໄຟ ບຶງໄຟນີ້ແຫລະ, ເປັນຄວາມຕາຍຄັ້ງທີສອງ. 15ຖ້າຜູ້ໃດບໍ່ມີຊື່ຈົດໄວ້ໃນທະບຽນ
ແຫ່ງຊີວິດ ຜູ້ນັ້ນກໍຖືກຖິ້ມລົງໃນບຶງໄຟ.

# ບົດທີ 21

## ທ້ອງຟ້າແລະແຜ່ນດິນໃໝ່

1ແລ້ວຂ້າພະເຈົ້າໄດ້ເຫັນທ້ອງຟ້າໃໝ່ແລະແຜ່ນດິນໂລກໃໝ່ ເພາະວ່າທ້ອງຟ້າເດີມແລະ
ແຜ່ນດິນໂລກເດີມນັ້ນໄດ້ລ່ວງໄປແລ້ວ ແລະທະເລກໍບໍ່ມີເໝືອນກັນ. 2ຂ້າພະເຈົ້າໄດ້ເຫັນນະ-
ຄອນສັກສິດ ຄືກຸງເຢຣູຊາເລັມໃໝ່ ກຳລັງລົງມາຈາກສະຫວັນແລະຈາກພຣະເຈົ້າ ນະຄອນນີ້
ໄດ້ຈັດຕຽມໄວ້ແລ້ວເໝືອນຢ່າງເຈົ້າສາວແຕ່ງຕົວໄວ້ສຳລັບເຈົ້າບ່າວ. 3ຂ້າພະເຈົ້າໄດ້ຍິນສຽງດັງ
ມາຈາກພຣະລາຊະບັນລັງວ່າ, "ເບິ່ງແມ, ທີ່ສະຖິດຂອງພຣະເຈົ້າກໍຢູ່ກັບມະນຸດແລ້ວ ພຣະອົງ
ຈະຊົງສະຖິດຢູ່ກັບເຂົາ[ກ] ເຂົາພວກນັ້ນແຫລະ, ຈະເປັນໄພ່ພົນຂອງພຣະອົງ ແລະພຣະເຈົ້າ
ເອງຈະປະທັບຢູ່ກັບເຂົາ. 4ພຣະເຈົ້າຈະຊົງເຊັດນ້ຳຕາທຸກໆ ຢົດຈາກຕາຂອງເຂົາ ຄວາມຕາຍ
ຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າ, ການຮ້ອງໄຫ້, ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະ-
ວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ.

5ພຣະອົງຜູ້ຊົງປະທັບເທິງພຣະລາຊະບັນລັງໄດ້ຊົງກ່າວວ່າ, "ເບິ່ງແມ, ເຮົາສ້າງສິ່ງທັງປວງ
ຂຶ້ນໃໝ່" ແລະພຣະອົງຊົງກ່າວອີກວ່າ, "ຈົ່ງຂຽນໄວ້ ເພາະວ່າຖ້ອຍຄຳເຫລົ່ານີ້ແຫລະ, ສັດຊື່
ແລະທ່ຽງແທ້." 6ພຣະອົງຊົງກ່າວກັບຂ້າພະເຈົ້າວ່າ, "ສຳເລັດແລ້ວ ເຮົານີ້ຄືອາລະຟາແລະໂອ-
ເມຄາ ເປັນເບື້ອງຕົ້ນແລະເປັນເບື້ອງປາຍ ຜູ້ໃດຫິວນ້ຳ ຝ່າຍເຮົາຈະໃຫ້ຜູ້ນັ້ນດື່ມຈາກນ້ຳພຸແຫ່ງ
ຊີວິດໂດຍບໍ່ຕ້ອງເສຍຄ່າ. 7ຜູ້ໃດມີໄຊຊະນະ ຜູ້ນັ້ນຈະໄດ້ຮັບສິ່ງເຫລົ່ານີ້ເປັນມໍລະດົກ ເຮົາຈະ
ເປັນພຣະເຈົ້າຂອງເຂົາ ເຂົານັ້ນແຫລະ, ຈະເປັນບຸດຂອງເຮົາ. 8ແຕ່ສ່ວນຄົນຂີ້ໂຢ່ຍ, ຄົນບໍ່
ເຊື່ອ,[ຂ] ຄົນທີ່ເຮັດການໜ້າກຽດໜ້າຊັງ, ຄົນຄາດຕະກຳ, ຄົນລ່ວງຜິດຊາຍຍິງ, ຄົນໃຊ້ເວດມົນ
ຄາຖາ, ຄົນໄຫວ້ພຣະທຽມ, ແລະຄົນຂີ້ຕົວະທຸກຄົນນັ້ນ ມໍລະດົກຂອງເຂົາຈະຢູ່ໃນບຶງທີ່ໄໝ້ຢູ່
ດ້ວຍໄຟປົນກັບມາດ ຊຶ່ງເປັນຄວາມຕາຍຄັ້ງທີສອງ."

## ກຸງເຢຣູຊາເລັມໃໝ່

9ເທວະດາຕົນໜຶ່ງໃນບັນດາເຈັດຕົນທີ່ຖືຂັນເຈັດໜ່ວຍ ອັນເຕັມໄປດ້ວຍໄພອັນຕະລາຍສຸດ
ທ້າຍທັງເຈັດປະການນັ້ນໄດ້ມາເວົ້າກັບຂ້າພະເຈົ້າວ່າ, "ເຊີນມານີ້ ເຮົາຈະໃຫ້ທ່ານເຫັນເຈົ້າສາວ
ທີ່ເປັນມະເຫສີຂອງພຣະເມສານ້ອຍນັ້ນ." 10ເພິ່ນໄດ້ຍົກຂ້າພະເຈົ້າດ້ວຍພຣະວິນຍານໄປເທິງພູ
ສູງໜ່ວຍໃຫຍ່ ແລະໄດ້ຊີ້ໃຫ້ຂ້າພະເຈົ້າເຫັນນະຄອນສັກສິດຄືກຸງເຢຣູຊາເລັມ ຊຶ່ງກຳລັງ ລົງ
ມາຈາກສະຫວັນແລະຈາກພຣະເຈົ້າ. 11ນະຄອນນັ້ນປະກອບດ້ວຍລັດສະໝີຂອງພຣະເຈົ້າ ມີ
ແສງຮຸ່ງເຮືອງເໝືອນແກ້ວມະນີອັນມີຄ່າແພງ ເໝືອນກັບແກ້ວມະນີໄຂດອັນເສາະໃສ. 12ນະ-

[ກ]ຫລືວ່າ "ພຣະເຈົ້າຄື 'ພຣະອົງຜູ້ຊົງສະຖິດຢູ່ກັບເຂົາ' ຈະຊົງເປັນພຣະເຈົ້າຂອງເຂົາ" (ເບິ່ງ ມທ 1:23.)
[ຂ]ຫລືວ່າ "ຄົນທໍລະຍົດ."

ຄອນນັ້ນມີກຳແພງໃຫຍ່ສູງ ມີປະຕູສິບສອງປ່ອງ ທີ່ປະຕູນັ້ນມີເທວະດາສິບສອງຕົນ ແລະທີ່
ປະຕູນັ້ນໄດ້ຈາລຶກຊື່ກະກຸນຂອງພວກອິສຣາເອນສິບສອງກະກຸນໄວ້. 13ທິດຕາເວັນອອກມີສາມ
ປະຕູ, ທິດເໜືອມີສາມປະຕູ, ທິດໃຕ້ມີສາມປະຕູ, ແລະທິດຕາເວັນຕົກມີສາມປະຕູ. 14ກຳແພງ
ນະຄອນນັ້ນມີຫີນສິບສອງກ້ອນເປັນຖານ ແລະທີ່ຫີນນັ້ນໄດ້ຈາລຶກຊື່ອັກຄະສາວົກສິບສອງຄົນ
ຂອງພຣະເມສານ້ອຍ.

15ເທວະດາຕົນທີ່ເວົ້າກັບຂ້າພະເຈົ້ານັ້ນຖືໄມ້ແທກຄຳ ເພື່ອຈະແທກພຣະນະຄອນ, ແທກປະຕູ
ກັບກຳແພງຂອງນະຄອນນັ້ນ. 16ຮູບຂອງນະຄອນນັ້ນເປັນສີ່ຫລ່ຽມມົນທົນ ກວ້າງຍາວທໍ່ກັນ
ເພິ່ນເອົາໄມ້ແທກນະຄອນນັ້ນໄດ້ລ້ານສອງແສນວາ ກວ້າງຍາວສູງທໍ່ກັນ. 17ເພິ່ນແທກກຳແພງ
ນະຄອນນັ້ນ ໄດ້ຮ້ອຍສີ່ສິບສີ່ສອກຕາມໄມ້ແທກວາທີ່ເທວະດານັ້ນໃຊ້ ຊຶ່ງເປັນເໝືອນໄມ້ແທກ
ວາທີ່ມະນຸດເຄີຍໃຊ້. 18ກຳແພງນະຄອນນັ້ນກໍ່ດ້ວຍແກ້ວມະນີໂຊດ ແລະນະຄອນນັ້ນສ້າງດ້ວຍ
ຄຳບໍລິສຸດສຸກໃສເໝືອນແກ້ວ. 19ບັນດາຖານຂອງກຳແພງນະຄອນນັ້ນປະດັບດ້ວຍເພັດພອຍ
ທຸກຊະນິດ ຖານທີໜຶ່ງເປັນແກ້ວມະນີໂຊດ, ທີສອງໄພທູນ, ທີສາມໂມຣາ, ທີສີ່ມໍລະກົດ. 20ທີ
ຫ້າບຸດ, ທີຫົກພິລາ, ທີເຈັດບຸສະບາຄຳນ້ຳແກ່, ທີແປດເພທາຍ, ທີເກົ້າບຸສະບາຄຳນ້ຳອ່ອນ, ທີ
ສິບປີກ, ທີສິບເອັດນິນ, ແລະທີສິບສອງເປັນແກ້ວເພທາຍສີມ່ວງ. 21ປະຕູທັງສິບສອງນັ້ນເຮັດ
ດ້ວຍໄຂ່ມຸກສິບສອງໜ່ວຍ ປະຕູລະໜ່ວຍ ແລະຖະໜົນໃນນະຄອນນັ້ນເປັນຄຳບໍລິສຸດສ່ອງໃສ
ເໝືອນແກ້ວ.

22ຂ້າພະເຈົ້າບໍ່ໄດ້ເຫັນມີພຣະວິຫານໃນນະຄອນນັ້ນ ເພາະອົງພຣະຜູ້ເປັນເຈົ້າ ຄືພຣະເຈົ້າຜູ້
ຊົງລິດທານຸພາບສູງສຸດແລະພຣະເມສານ້ອຍຊົງເປັນພຣະວິຫານໃນນະຄອນນັ້ນ. 23ນະຄອນ
ນັ້ນບໍ່ຕ້ອງການແສງສະຫວ່າງຂອງດວງອາທິດແລະດວງຈັນເພາະພຣະລັດສະໝີຂອງພຣະເຈົ້າ
ຊົງເປັນແສງສະຫວ່າງ ແລະພຣະເມສານ້ອຍຊົງເປັນໂຄມໄຟຂອງນະຄອນນັ້ນ. 24ບັນດາປະ-
ຊາຊາດຈະທ່ຽວໄປມາໃນຖ້າມກາງແສງສະຫວ່າງຂອງນະຄອນນັ້ນ ແລະບັນດາກະສັດໃນ
ແຜ່ນດິນໂລກຈະນຳເອົາສະຫງ່າລາສີຂອງຕົນເຂົ້າໄປໃນນະຄອນນັ້ນ. 25ປະຕູທັງຫລາຍໃນນະ-
ຄອນນັ້ນຈະບໍ່ອັດໃນເວລາກາງເວັນ (ເພາະໃນນະຄອນນັ້ນບໍ່ມີກາງຄືນ). 26ເຂົາຈະນຳເອົາສະ-
ຫງ່າລາສີແລະກຽດຕິຍົດຂອງນານາປະເທດມາສູ່ນະຄອນນັ້ນ. 27ສິ່ງໜຶ່ງສິ່ງໃດທີ່ຖືກຊົ່ວມົວ
ໝອງ ຫລືຜູ້ໃດທີ່ເຮັດການໜ້າກຽດໜ້າຊັງຫລືເວົ້າຕົວະ ຈະເຂົ້າໄປໃນນະຄອນນັ້ນບໍ່ໄດ້ເປັນ
ເດັດຂາດ ມີແຕ່ຄົນທັງຫລາຍທີ່ມີຊື່ ຈົດໄວ້ໃນທະບຽນຂອງພຣະເມສານ້ອຍເທົ່ານັ້ນຈຶ່ງຈະເຂົ້າ
ໄດ້.

# ບົດທີ 22

1ແລ້ວເທວະດາຕົນນັ້ນໄດ້ຊີ້ໃຫ້ຂ້າພະເຈົ້າເຫັນແມ່ນ້ຳທີ່ມີນ້ຳແຫ່ງຊີວິດໃສເໝືອນແກ້ວ ໄຫລ
ອອກມາຈາກພຣະລາຊະບັນລັງຂອງພຣະເຈົ້າ ແລະຂອງພຣະເມສານ້ອຍ. 2ນ້ຳນັ້ນໄຫລຜ່ານ
ຖະໜົນຂອງນະຄອນນັ້ນ ຢູ່ຮິມແມ່ນ້ຳທັງສອງຟາກມີຕົ້ນໄມ້ແຫ່ງຊີວິດຊຶ່ງເກີດຜົນສິບສອງຊະ-
ນິດເກີດຜົນທຸກເດືອນ ແລະໃບຕົ້ນນັ້ນສຳລັບປົວບັນດາປະຊາຊາດໃຫ້ດີ. 3ຈະບໍ່ມີສິ່ງໃດຖືກຊົງ

ປ້ອຍດ່າອີກຕໍ່ໄປ ແຕ່ພຣະລາຊະບັນລັງຂອງ ພຣະເຈົ້າ ແລະຂອງພຣະເມສານ້ອຍຈະຕັ້ງຢູ່ທີ່ນັ້ນ
ແລະບັນດາຂ້ອຍໃຊ້ຂອງພຣະອົງຈະບົວລະບັດພຣະອົງ. 4ເຂົາຈະເຫັນພຣະພັກຂອງພຣະອົງ
ແລະພຣະນາມຂອງພຣະອົງຈະຊົງປະທັບຕາໃສ່ໜ້າຜາກຂອງເຂົາ. 5ກາງຄືນຈະບໍ່ມີອີກຕໍ່ໄປ
ເຂົາບໍ່ຕ້ອງການແສງໂຄມໄຟຫລືແສງອາທິດ ເພາະວ່າອົງ ພຣະຜູ້ເປັນເຈົ້າ ຈະຊົງສ່ອງສະຫວ່າງ
ໃສ່ເຂົາ ແລະເຂົາຈະໄດ້ຄຸ້ມຄອງຢູ່ຕະຫລອດໄປເປັນນິດ.

## ພຣະເຢຊູສະເດັດມາໂດຍໄວ

6ເທວະດາຕົນນັ້ນໄດ້ບອກຂ້າພະເຈົ້າວ່າ, "ຖ້ອຍຄຳເຫລົ່ານີ້ແຫລະ, ສັດຊື່ແລະທ່ຽງແທ້ ອົງ
ພຣະຜູ້ເປັນເຈົ້າ, ພຣະເຈົ້າ ແຫ່ງດວງວິນຍານຂອງບັນດາຜູ້ປະກາດພຣະທຳ ໄດ້ຊົງໃຫ້ເທວະ-
ດາຂອງພຣະອົງສະແດງ ແກ່ບັນດາຂ້ອຍໃຊ້ຂອງພຣະອົງ ເພື່ອໃຫ້ຮູ້ເຫດການທັງປວງທີ່ຈຳເປັນ
ຕ້ອງເກີດຂຶ້ນໃນໄວໆ ນັ້ນ."
7"ເບິ່ງແມ, ເຮົາຈະມາໃນໄວໆ ນີ້ ຜູ້ໃດທີ່ຖືຮັກສາຄຳທຳນວາຍໃນໜັງສືມ້ວນນີ້ ຜູ້ນັ້ນ
ແຫລະ, ເປັນສຸກ."
8ຝ່າຍຂ້າພະເຈົ້າ, ຄືໂຢຮັນ ເປັນຜູ້ໄດ້ຍິນແລະໄດ້ເຫັນເຫດການເຫລົ່ານີ້ ເມື່ອຂ້າພະເຈົ້າໄດ້
ຍິນແລະໄດ້ເຫັນແລ້ວ ກໍນ້ອມຕົວລົງຈະນະມັດສະການແທບຕີນຂອງເທວະດາຕົນທີ່ໄດ້ສະແດງ
ເຫດການເຫລົ່ານີ້ແກ່ຂ້າພະເຈົ້າ. 9ເທວະດາຕົນນັ້ນໄດ້ກ່າວກັບຂ້າພະເຈົ້າວ່າ, "ລະວັງ, ຢ່າເຮັດ
ຢ່າງນັ້ນ ເຮົາເປັນເພື່ອນຂ້ອຍໃຊ້ຢ່າງດຽວກັນກັບທ່ານ ແລະກັບພວກພີ່ນ້ອງຂອງທ່ານຊຶ່ງເປັນຜູ້
ປະກາດພຣະທຳ ແລະກັບພວກທີ່ຖືຮັກສາຖ້ອຍຄຳທັງຫລາຍໃນໜັງສືມ້ວນນີ້ ໃຫ້ທ່ານນະມັດ-
ສະການ ພຣະເຈົ້າ ສາ. 10ແລ້ວເພິ່ນໄດ້ບອກຂ້າພະເຈົ້າວ່າ, "ຢ່າປະທັບຕາອັດຄຳທຳນວາຍໃນ
ໜັງສືມ້ວນນີ້ ເພາະວ່າເວລານັ້ນໃກ້ຈະເຖິງແລ້ວ. 11ຝ່າຍຄົນອະທຳກໍໃຫ້ເຮັດການອະທຳຕໍ່ໄປ
ຜູ້ທີ່ເປັນຄົນຊົ່ວຊ້າກໍໃຫ້ເຂົາຊົ່ວຊ້າຕໍ່ໄປ ຝ່າຍຄົນຊອບທຳກໍໃຫ້ເຮັດການຊອບທຳຕໍ່ໄປ ແລະຜູ້ທີ່
ເປັນຄົນບໍລິສຸດກໍໃຫ້ເຂົາເປັນບໍລິສຸດຕໍ່ໄປ."

12 "ເບິ່ງແມ, ເຮົາຈະມາໃນໄວໆ ນີ້ ເຮົາຈະນຳເອົາບຳເໜັດຂອງເຮົາມານຳ ເພື່ອ
ຕອບແທນການປະຕິບັດຂອງທຸກຄົນ. 13ຝ່າຍເຮົາ, ຄືອາລະຟາ ແລະ ໂອເມ-
ຄາ, ຜູ້ເປັນກົກແລະຜູ້ສຸດທ້າຍ, ເປັນເບື້ອງຕົ້ນແລະເປັນເບື້ອງປາຍ.

14ຄົນທັງຫລາຍທີ່ຊຳລະລ້າງເສື້ອຜ້າຂອງຕົນນັ້ນແຫລະ, ເປັນສຸກ ເພື່ອວ່າເຂົາຈະມີສິດເຂົ້າ
ໄປເຖິງຕົ້ນໄມ້ທີ່ໃຫ້ມີຊີວິດ ແລະເພື່ອເຂົາຈະໄດ້ເຂົ້າໄປໃນນະຄອນນັ້ນທາງປະຕູ. 15ສ່ວນຝູງ
ໝາກັບຄົນທີ່ໃຊ້ເວດມົນຄາຖາ, ຄົນລ່ວງຜິດຊາຍຍິງ, ຄົນຄາດຕະກຳ, ຄົນໄຫວ້ພຣະທຽມ, ກັບ
ທຸກໆ ຄົນທີ່ຮັກຄວາມບໍ່ຈິງແລະເຮັດຕາມພວກເຫລົ່ານີ້ແຫລະ, ຈະຢູ່ພາຍນອກ."
16"ຝ່າຍເຮົາ, ຄືເຢຊູ, ເຮົາໄດ້ໃຊ້ເທວະດາຂອງເຮົາໄປເປັນພະຍານ ເພື່ອສະແດງເຫດການ
ເຫລົ່ານີ້ແກ່ທ່ານສຳລັບຄຣິສຕະຈັກທັງຫລາຍ ເຮົານີ້ເປັນຮາກເຄົ້າແລະໜໍ່ເຊື້ອຂອງ ດາວິດ,
ເປັນດາວເພັກດວງໃສຮຸ່ງເຮືອງ." 17ຝ່າຍ ພຣະວິນຍານ ແລະ ເຈົ້າສາວຊົງກ່າວວ່າ, "ເຊີນມາ"
ໃຫ້ຜູ້ໄດ້ຍິນນັ້ນທູນວ່າ, "ເຊີນມາ" ໃຫ້ຜູ້ຫິວນ້ຳເຂົ້າມາ ຜູ້ໃດມີໃຈປາດຖະໜາກໍໃຫ້ຜູ້ນັ້ນມາຮັບ
ນ້ຳສຳລັບຊີວິດໂດຍບໍ່ຕ້ອງເສຍຄ່າ.

[18]ຝ່າຍຂ້າພະເຈົ້າ, ເປັນພະຍານແກ່ທຸກຄົນທີ່ໄດ້ຍິນຄໍາທໍານວາຍທັງຫລາຍໃນໜັງສືມ້ວນນີ້
ວ່າ ຖ້າຜູ້ໃດຈະເພີ່ມເຕີມຂໍ້ຄວາມໃດໃສ່ໜັງສືນີ້ **ພຣະເຈົ້າ**ຈະຊົງເອົາໄພອັນຕະລາຍທີ່ຂຽນໄວ້
ໃນໜັງສືມ້ວນນີ້ ເພີ່ມເຕີມແກ່ຜູ້ນັ້ນ. [19]ແລະຖ້າຜູ້ໃດຕັດຂໍ້ຄວາມໃດອອກຈາກໜັງສືທໍານວາຍນີ້
**ພຣະເຈົ້າ**ກໍຈະຊົງຕັດສ່ວນແບ່ງຂອງຜູ້ນັ້ນທີ່ມີຢູ່ໃນຕົ້ນໄມ້ຊຶ່ງໃຫ້ມີຊີວິດ ແລະສ່ວນແບ່ງໃນນະ-
ຄອນສັກສິດ ທີ່ຂຽນໄວ້ໃນໜັງສືມ້ວນນີ້ອອກເສຍ.

[20]ພຣະອົງຜູ້ຊົງເປັນພະຍານໃນເຫດການເຫລົ່ານີ້ຊົງກ່າວວ່າ, "ແນ່ນອນ, ເຮົາຈະມາໃນໄວໆ
ນີ້."

"ອາແມນ, **ພຣະເຢຊູເຈົ້າ** ເຊີນສະເດັດມາເທີນ."

[21]ຂໍໃຫ້ພຣະຄຸນແຫ່ງ **ພຣະເຢຊູເຈົ້າ** ຈົ່ງສະຖິດຢູ່ນໍາຄົນທັງປວງເທີນ.

* * *

# ຊື່ທີ່ພົບໃນພຣະຄຳພີພຣະສັນຍາໃໝ່

| | | |
|---|---|---|
| ກະເຣເຕ | Crete | ກຈກ 2:11 |
| ກະໂລດີໂອ | Claudius | ກຈກ 11:28 |
| ການາ | Cana | ຢຮ 2:1 |
| ການາອານ | Canaan | ມທ 15:22 |
| ກາເປນາອູມ | Capernaum | ມທ 4:13 |
| ກາຢະຟາ | Caiaphas | ມທ 26:3 |
| ກາອິນ | Cain | 1ຢຮ 3:12 |
| ກີເຣເນ | Cyrene | ມທ 27:32 |
| ກີລີເກຍ | Cilicia | ກຈກ 6:9 |
| ເກຟາ | Cephas | ຢຮ 1:42 |
| ໂກເນລີໂອ | Cornelius | ກຈກ 10:1 |
| ໂກໂມຣາ | Gomorrah | ມທ 10:15 |
| ໂກຣິນໂທ | Corinth | ກຈກ 18:1 |
| ກຸງໂຣມ | Rome | ກຈກ 2:10 |
| ກາຍຊາ | Caesar | ມທ 22:17 |
| ກາຍຊາເຣຍ | Caesarea | ມທ 16:13 |
| ກາຍນານ | Cainan | ລກ 3:36 |
| ກຸບໂຣ | Cyprus | ກຈກ 4:36 |
| ກຣີກ | Greek | ມຣກ 7:26 |
| ຄາມາລີເອັນ | Gamaliel | ກຈກ 5:34 |
| ຄາໂຢ | Gaius | ກຈກ 19:29 |
| ຄາລາເຕຍ | Galatia | ກຈກ 16:6 |
| ຄາລີເລ | Galilee | ມທ 26:32 |
| ຄາລີໂອນ | Gallio | ກຈກ 18:12 |
| ໂຄລະໂຄທາ | Golgotha | ມທ 27:33 |
| ຄາດ | Gad | ພນມ 7:5 |
| ເຄັນເນຊາເຣັດ | Gennesaret | ມທ 14:34 |
| ຄຣິສະຕຽນ | Christian | ກຈກ 11:26 |
| ເຄຣາຊາ | Gerasene | ມຣກ 5:1 |
| ຄຣິດ | Christ | ກຈກ 28:31 |
| ສະເຕຟານາ | Stephanas | 1ກຣທ 1:16 |
| ຊະເຕຟາໂນ | Stephen | ກຈກ 6:5 |
| ຊະບາໂຕ | Sabbath | ມທ 12:1 |
| ຊາຂາຣີຢາ | Zacharias | ລກ 1:5 |
| ຊາດູກາຍ | Sadducees | ມທ 3:7 |
| ຊາເດ | Sardis | ພນມ 1:11 |
| ຊາຕານ | Satan | ມຣກ 3:23 |
| ຊາມາເຣຍ | Samaria | ມທ 10:5 |
| ຊາມູເອນ | Samuel | ກຈກ 3:24 |
| ຊາຣາ | Sarah | ຣມ 4:19 |
| ຊາເລັມ | Salem | ຮຣ 7:1 |
| ຊີເມໂອນ | Simeon | ລກ 2:25 |
| ຊີໂດນ | Sidon | ມທ 11:21 |
| ຊີນາຍ | Sinai | ກຈກ 7:30 |
| ຊີໂມນ | Simon | ມທ 4:18 |
| ຊີເຣຍ | Syria | ມທ 4:24 |
| ຊີລາ | Silas | ກຈກ 15:22 |
| ຊີລາວານ | Silvanus | 2ກຣທ 1:19 |
| ຊີໂລອາມ | Siloam | ລກ 13:4 |
| ຊີໂອນ | Zion | ມທ 21:5 |
| ເຊບູລູນ | Zebulun | ມທ 4:13 |
| ເຊເບດາຍ | Zebedee | ມທ 4:21 |
| ເຊຣູບາເບນ | Zerubbabel | ມທ 1:12 |
| ເຊລາ | Zela | ລກ 3:35 |
| ໂຊໂດມ | Sodom | ມທ 10:15 |
| ໂຊໂລ | Saul | ກຈກ 7:58 |
| ໂຊໂລໂມນ | Solomon | ມທ 1:6 |
| ຊັກຂາຍ | Zacchaeus | ລກ 19:2 |
| ເຊມ | Shem | ລກ 3:36 |
| ດາມາເຊ | Damascus | ກຈກ 9:2 |

**ຊື່ໃນພຣະສັນຍາໃໝ່**

| | | |
|---|---|---|
| ດາວິດ | David | ມທ 1:1 |
| ເດກາໂປລີ | Decapolis | ມທ 4:25 |
| ເດມາ | Demas | ກລຊ 4:14 |
| ເດເມທີໂອ | Demetrius | ກຈກ 19:24 |
| ເດຣະເບ | Derbe | ກຈກ 14:6 |
| ຕາໂຊ | Tarsus | ກຈກ 9:11 |
| ຕີຂີໂກ | Tychicus | ກຈກ 20:4 |
| ຕີໂຕ | Titus | ກຈກ 18:7 |
| ຕີເບເຣຍ | Tiberias | ຢຮ 6:1 |
| ຕີໂມທຽວ | Timothy | ກຈກ 16:1 |
| ຕີເຣ | Tyre | ມທ 11:21 |
| ເຕຣາ | Terah | ລກ 3:34 |
| ເທຊະໂລນິກ | Thessalonica | ກຈກ 17:1 |
| ໂທຟີໂມ | Trophimus | ກຈກ 20:4 |
| ໂທມາ | Thomas | ມທ 10:3 |
| ໂທອາດ | Troas | ກຈກ 16:8 |
| ທົວເຕຣາ | Thyatira | ກຈກ 16:14 |
| ນະທານາເອັນ | Nathanael | ຢຮ 1:45 |
| ນາຊາເຣັດ | Nazareth | ມທ 2:23 |
| ນາໂຊນ | Nahshon | ມທ 1:4 |
| ນີໂກເດມ | Nicodemus | ຢຮ 3:1 |
| ນີເນເວ | Nineveh | ມທ 12:41 |
| ໂນອາ | Noah | ມທ 24:37 |
| ນັບທາລີ | Naphtali | ມທ 4:13 |
| ບາບີໂລນ | Babylon | ມທ 1:11 |
| ບາຣະໂທໂລມາຍ | Bartholomew | ມທ 10:3 |
| ບາຣະນາບາ | Barnabas | ກຈກ 4:36 |
| ບາຣາບາ | Barabbas | ມທ 27:16 |
| ບາລາອາມ | Balaam | 2ປຕ 2:15 |
| ເບນີເກ | Bernice | ກຈກ 25:13 |
| ເບເຣຍ | Beroea | ກຈກ 17:10 |
| ເບເອນເຊບຸບ | Beelzebub | ມຣກ 3:22 |
| ເບັດຊາອີດາ | Bethsaida | ມທ 11:21 |
| ເບັດທານີ | Bethany | ມທ 21:17 |
| ເບັດຟາເຄ | Bethphage | ມທ 21:1 |
| ເບັດເລເຮັມ | Bethlehem | ມທ 2:1 |
| ເບັນຢາມິນ | Benjamin | ກຈກ 13:21 |
| ບັບຕິສະໂຕ | Baptizer | ມທ 3:1 |
| ປາໂຟ | Paphos | ກຈກ 13:6 |
| ປີຊະກີລາ | Priscilla | ກຈກ 18:2 |
| ປີລາດ | Pilate | ມທ 27:2 |
| ເປເຄ | Perga | ກຈກ 13:13 |
| ເປໂຕ | Peter | ມທ 26:33 |
| ໂປໂລ | Paul | ກຈກ 13:7 |
| ປຳຟີເລຍ | Pamphylia | ກຈກ 13:13 |
| ປັດສະຄາ | Passover | ມທ 26:17 |
| ປົນຕີໂອ | Pontius | ລກ 3:1 |
| ປົນໂຕ | Pontus | ກຈກ 2:9 |
| ໄປຣໂຕຣຽນ | Praetorium | ມທ 27:27 |
| ເພັນເຕຄໍສະເຕ | Pentecost | ກຈກ 2:1 |
| ຟາຣາໂອ | Pharaoh | ກຈກ 7:10 |
| ຟາຣີຊາຍ | Pharisee | ມທ 3:7 |
| ຟີເຄຍ | Phrygia | ກຈກ 2:10 |
| ຟີລິບ | Philip | ມທ 10:3 |
| ຟີລິບປອຍ | Philippi | ມທ 16:13 |
| ເຟຊະໂຕ | Festus | ກຈກ 24:27 |
| ເຟລິກ | Felix | ກຈກ 23:24 |
| ຟອຍນີເກ | Phoenicia | ກຈກ 11:19 |
| ມາເກໂດເນຍ | Macedonia | ກຈກ 16:9 |
| ມາທາ | Martha | ລກ 10:38 |
| ມານາ | manna | ຢຮ 6:31 |
| ມາຣະໂກ | Mark | ກຈກ 12:12 |

# ຊື່ໃນພຣະສັນຍາໃໝ່

| | | | | | |
|---|---|---|---|---|---|
| ມາຣີອາ | Mary | ມທ 1:16 | ລີເຊຍ | Lysias | ກຈກ 23:26 |
| ມີເລໂຕ | Miletus | ກຈກ 20:15 | ລູກາ | Luke | ກລຊ 4:14 |
| ໂມເຊ | Moses | ມທ 8:4 | ເລວີ | Levi | ມຣກ 2:14 |
| ມັກດາລາ | Magdalene | ມທ 27:56 | ລິດດາ | Lydda | ກຈກ 9:32 |
| ມັດທາຍ | Matthew | ມທ 9:9 | ໂລດ | Lot | ລກ 17:28 |
| ເມັນຄີເຊເດັກ | Melchizedek | ຮຣ 5:6 | ລາວດີເກອາ | Laodicea | ກລຊ 2:1 |
| ຢາໂກໂບ | James | ມທ 4:21 | ອະຂາຢາ | Achaia | ກຈກ 18:12 |
| ຢາໂຄບ | Jacob | ມທ 1:2 | ອາກີລາ | Aquila | ກຈກ 18:2 |
| ຢາໂຊນ | Jason | ກຈກ 17:5 | ອາຄະໂບ | Agabus | ກຈກ 11:28 |
| ຢູສະໂຕ | Justus | ກຈກ 1:23 | ອາຄຣິປາ | Agrippa | ກຈກ 25:13 |
| ຢູດາ | Judas | ມທ 26:14 | ອາຊາ | Asa | ມທ 1:7 |
| ຢູດາຍ | Judea | ມທ 2:1 | ອາເຊ | Asher | ລກ 2:36 |
| ເຢຊີ | Jesse | ມທ 1:5 | ອາໂຊ | Azor | ມທ 1:13 |
| ເຢຊູ | Jesus | ມທ 1:21 | ອາເຊຍ | Asia | ກຈກ 2:9 |
| ເຢຣີໂກ | Jericho | ມທ 20:29 | ອາດາມ | Adam | ລກ 3:38 |
| ເຢຣູຊາເລັມ | Jerusalem | ມຣກ 3:22 | ອາເຕມິດ | Artemis | ກຈກ 19:24 |
| ເຢເຣມີຢາ | Jeremiah | ມທ 2:17 | ອາແຖນ | Athens | ກຈກ 17:15 |
| ໂຢເຊ | Joses | ມຣກ 6:3 | ອານາ | Anna | ລກ 2:36 |
| ໂຢເຊັບ | Joseph | ມທ 1:16 | ອານາເນຍ | Ananias | ກຈກ 5:1 |
| ໂຢນາ | Jonah | ມທ 12:39 | ອາເບັນ | Abel | ມທ 23:35 |
| ໂຢຮັນ | John | ມທ 3:1 | ອາໂປໂລ | Apollos | ກຈກ 18:24 |
| ຢໍແດນ | Jordan | ມທ 3:5 | ອາຣີມາທາຍ | Arimathaea | ມທ 27:57 |
| ຢົບປາ | Joppa | ກຈກ 9:36 | ອາເຣໂອປາໂຄ | Areopagus | ກຈກ 17:19 |
| ຢິວ | Jew,Jews | ມທ 2:2 | ອາຣິດຕາໂຂ | Aristarchus | ກຈກ 19:29 |
| ຣາຮາບ | Rahab | ມທ 1:5 | ອາໂຣນ | Aaron | ລກ 1:5 |
| ໂຣເດ | Rhoda | ກຈກ 12:13 | ອາລະຟາ | Alpha | ພນມ 1:8 |
| ຣາມ | Ram | ມທ 1:3 | ອາລະຟາຍ | Alphaeus | ມທ 10:4 |
| ໂຣມ | Romans | ຢຮ 11:48 | ອາເລລູຢາ | Hallelujah | ພນມ 19:1 |
| ລາຊະໂຣ | Lazarus | ລກ 16:20 | ອາເລັກຊັນໂດ | Alexander | ມຣກ 15:21 |
| ລີເກຍ | Lycia | ກຈກ 27:5 | ອາເລັກຊັນເດຍ | Alexandria | ກຈກ 6:9 |
| ລີຊະທາ | Lystra | ກຈກ 14:6 | ອາຫລັບ | Arab | ກຈກ 2:11 |

# ຊື່ໃນພຣະສັນຍາໃໝ່

| | | |
|---|---|---|
| ອິສະກາຣີອົດ | Iscariot | ມທ 26:14 |
| ອິສຣາເອນ | Israel | ມທ 2:6 |
| ອີໂກນີອົນ | Iconium | ກຈກ 13:51 |
| ອີຊາກ | Isaac | ມທ 1:2 |
| ອີຕາເລຍ | Italy | ກຈກ 10:1 |
| ເອຊາຢາ | Isaiah | ມທ 3:3 |
| ເອຊາວ | Esau | ຣມ 9:13 |
| ເອໂນກ | Enoch | ລກ 3:37 |
| ເອປາຟາ | Epaphras | ກລຊ 1:7 |
| ເອເຟໂຊ | Ephesus | ກຈກ 18:19 |
| ເອຢິບ | Egypt | ມທ 2:13 |
| ເອລີ | Eli | ມທ 27:46 |
| ເອລີຊາ | Elisha | ລກ 4:27 |
| ເອລີຊາເບັດ | Elisabeth | ລກ 1:5 |
| ເອລີມາ | Elymas | ກຈກ 13:8 |

| | | |
|---|---|---|
| ເອລີຢາ | Elijah | ມທ 11:14 |
| ເອລີຢາກິມ | Eliakim | ມທ 1:13 |
| ໂອເນຊີໂມ | Onesimus | ກລຊ 4:9 |
| ໂອເມຄາ | Omega | ພນມ 1:8 |
| ອັນເດອາ | Andrew | ມທ 4:18 |
| ອັນຕີໂອເຂຍ | Antioch | ກຈກ 6:5 |
| ອັນນາ | Annas | ລກ 3:2 |
| ອັບບາ | Abba | ມຣກ 14:36 |
| ອັບຣາຮາມ | Abraham | ມທ 1:1 |
| ເອຣາຊະໂຕ | Erastus | ກຈກ 19:22 |
| ເຮໂຣເດຍ | Herodias | ມທ 14:3 |
| ເຮໂຣດ | Herod | ມທ 2:1 |
| ໂຮຊັນນາ | Hosanna | ມທ 21:9 |
| ເຮັບເຣີ | Hebrew | ຢຣ 5:2 |